ປາຍທາງແຫ່ງຄວາມຫວັງ

The Great Controversy

ໂດຍ ເອເລນ ຈີ. ໄວທ໌

Ellen G. White

ພິມຄັ້ງທຳອິດ ເດືອນພະຈິກ 2026

ຂໍອຸທິດໜັງສືເຫຼັ້ມນີ້

ແກ່ຜູ້ທີ່ຫິວກະຫາຍ ແລະ ສະແຫວງຫາສັດຈະທຳ.

ສາລະບານ

ຄຳນຳ vii
1. ຄວາມພິນາດຂອງນະຄອນເຢຣູຊາເລັມ 1
2. ການຂົ່ມເຫັງໃນຍຸກທຳອິດ 19
3. ຍຸກມືດຝ່າຍຈິດວິນຍານ 27
4. ຊາວໂວດົວ 37
5. ຈອນ ໄວຄລິບ 51
6. ຮັສ ແລະ ເຈໂຣມ 67
7. ລູເທີແຍກຈາກຄຣິສຕະຈັກໂຣມ 87
8. ລູເທີຕໍ່ໜ້າສະພາ 107
9. ນັກປະຕິຮູບຊາວສວິສ 129
10. ການປະຕິຮູບສືບຕໍ່ໃນອານາຈັກເຢຍລະມັນ 141
11. ພວກເຈົ້າແຂວງປະທ້ວງ 151
12. ການປະຕິຮູບໃນປະເທດຝຣັ່ງ 163
13. ການປະຕິຮູບໃນປະເທດເນເທີແລນ ແລະ ສະແກນດິເນເວຍ 185
14. ນັກປະຕິຮູບຊາວອັງກິດລຸ້ນຫຼັງ 193
15. ພຣະຄຳພີ ແລະ ການປະຕິວັດຝຣັ່ງ 209
16. ກຸ່ມປີນກຣີມລຸ້ນບຸກເບີກ 227
17. ຜູ້ປະກາດແຫ່ງຮຸ່ງອາລຸນ 237
18. ນັກປະຕິຮູບ ຊາວ ອາເມຣິກາ 253
19. ແສງສະຫວ່າງທີ່ສ່ອງໃນຄວາມມືດ 275
20. ການຟື້ນຟູຄັ້ງຍິ່ງໃຫຍ່ 285
21. ປະຕິເສດຄຳເຕືອນ 301
22. ຄຳພະຍາກອນສຳເລັດ 315
23. “ສະຖານບໍຣິສຸດ ” ແມ່ນຫຍັງ ? 329
24. ໃນສະຖານທີ່ສັກສິດທີ່ສຸດ 341
25. ພຣະບັນຍັດຂອງພຣະເຈົ້າປ່ຽນແປງບໍ່ໄດ້ 349
26. ວຽກງານປະຕິຮູບ 363
27. ການຟື້ນຟູໃນສະໄໝໃໝ່ 371
28. ການພິພາກສາ 387
29. ຄວາມຊື່ວມາແຕ່ໃສ 397
30. ຄວາມກ່ຽດຊັງລະຫວ່າງມະນຸດກັບຊາຕານ 407
31. ການເຄື່ອນໄຫວຂອງວິນຍານຊົ່ວ 413
32. ຫຼຸມດັກຂອງຊາຕານ 419

33. ความจริงเลื่องความตาย 429
34. อิบยามชื่อซ็ามบ์ดผ็มตาย 445
35. เสลิพาบทางจิดสำมึกถึกคุกคาม 455
36. ความขัดแย้งที่ใก้จะเกิดขึ้น 471
37. พระคำพิ โล้ป้องกันไพ 479
38. การเตือนครั้งสุดท้าย 487
39. เวลา แห่ง ความทุกยากลำบาก 495
40. พระเจ้าชิงกอบกู้ผ็มของพระองค์ 513
41. แผ่นดินโลกร้างเป่า 527
42. ความขัดแย้งสิ้นสุดลง 535

ຄຳນຳ

ຄຳພະຍາກອນທີ່ໃກ້ຈະສຳເລັດ

ເນື່ອງຈາກເຫດການທີ່ທຳນວາຍໄວ້ໃນພຣະຄຣິສຕະທຳຄຳພີເລື່ອງຍຸກສຸດທ້າຍ ໄດ້ສຳເລັດໄປແລ້ວ ຫຼາຍຢ່າງ, ແລະເບິ່ງຄືວ່າ ໂລກມະນຸດເຮົາກຳລັງກ້າວເຂົ້າສູ່ສາກສຸດທ້າຍໃນຄຳພະຍາກອນ ກ່ອນ ທີ່ອົງພຣະເຢຊູຄຣິສຈະສະເດັດກັບມາ, ຜູ້ຈັດພິມຈຶ່ງເຫັນສົມຄວນວ່າຄົນລາວບໍ່ຄວນພາດໂອກາດໃນ ການຮັບຮູ້ເຖິງຄຳພະຍາກອນທີ່ກ່ຽວຂ້ອງກັບຊະຕາຊີວິດຂອງມະນຸດທຸກຄົນ. *ປາຍທາງແຫ່ງຄວາມ ຫວັງ* ເປັນໜັງສືທີ່ດີທີ່ສຸດເຫຼັ້ມໜຶ່ງທີ່ອະທິບາຍຄຳພະຍາກອນ ແລະ ໄດ້ເປີດເຜີຍສາກເບື້ອງຫຼັງ ເຫດການຕ່າງ ໆໃນປະຫວັດສາດ ທີ່ຈະຊ່ວຍບັນດາຜູ້ຫິວກະຫາຍຄວາມຈິງໄດ້ຮູ້ທັນກົນອຸບາຍຂອງ ຊາຕານ ເພື່ອຈະບໍ່ຖືກຫຼອກລວງ. ຜູ້ຂຽນໄດ້ເລືອກເຫດການສຳຄັນຕັ້ງແຕ່ການທຳລາຍນະຄອນ ເຢຣູຊາເລັມໃນປີ ຄ.ສ. 70, ການທີ່ຄົນຂອງພຣະເຈົ້າຫຼົງຈາກຄວາມເຊື່ອໃນສະຕະວັດຕໍ່ມາ ເຊິ່ງນຳໄປສູ່ ການຂຶ້ນສູ່ອຳນາດຂອງ “ສັດຮ້າຍ” ຕາມຄຳພະຍາກອນ ແລະ ສະໄໝຍຸກມືດ; ນອກຈາກນັ້ນ, ໜັງສື ເຫຼັ້ມນີ້ຍັງໄດ້ບັນລະຍາຍເຖິງການດິ້ນຮົນຕໍ່ສູ້ລະຫວ່າງຄວາມຈິງກັບຄວາມເທັດ ທີ່ສືບຕໍ່ເນື່ອງກັນມາ ຈົນເຖິງສະໄໝຂອງພວກເຮົາ ທີ່ຂ່າວຂອງທູດສະຫວັນສາມອົງກຳລັງໄດ້ຮັບການປ່າວປະກາດ ກ່ອນ ທີ່ໂອກາດແຫ່ງພຣະກະລຸນາຈະໝົດໄປ. ສະນັ້ນ, ຈະເຫັນໄດ້ວ່າ ໜັງສື *ປາຍທາງແຫ່ງຄວາມ ຫວັງ* ໄດ້ເປີດສາກເບື້ອງຫຼັງອະດີດໃຫ້ກະຈ່າງ, ເປີດເຜີຍການເຄື່ອນໄຫວຕ່າງ ໆໃນປັດຈຸບັນ ແລະ ໄຂ ປິດສະໜາຄວາມເລິກລັບຂອງອະນາຄົດ ເພື່ອຊ່ວຍຜູ້ອ່ານໃຫ້ພ້ອມສຳລັບເຫດການທີ່ຈະເກີດຂຶ້ນໃນບໍ່ ຊ້າ.

ພຣະຄຳພີທີ່ນຳໃຊ້ໃນການອ້າງອີງ

ພຣະຄຣິສຕະທຳຄຳພີແບ່ງອອກເປັນສອງໝວດໃຫຍ່ ທີ່ເຮົາມັກເອີ້ນກັນວ່າ “ພຣະຄຳພີພາກ ພັນທະສັນຍາເດີມ” ຫຼືວ່າ “ພຣະຄຳພີເດີມ” ແລະ “ພຣະຄຳພີພາກພັນທະສັນຍາໃໝ່” ຫຼືວ່າ “ພຣະຄຳພີໃໝ່.” ໃນສະໄໝດັ້ງເດີມ, ພຣະຄຳພີເດີມຂຽນເປັນພາສາເຮັບເຣີ; ສ່ວນພຣະຄຳພີໃໝ່ ກໍ ຂຽນເປັນພາສາກຣີກ. ຕໍ່ມາມີການແປພຣະຄຳພີເປັນພາສາຕ່າງ ໆ ແລະ ໃນຫຼາຍພາສາມີການຈັດ ແປຫຼາຍຄັ້ງຫຼາຍລຸ້ນ ທີ່ເຮົາເອີ້ນວ່າ “version” ຫຼືວ່າ “ສະບັບແປ.” ຜູ້ຂຽນສ່ວນຫຼາຍໃຊ້ສະບັບ ຄິງເຈມ (KJV) ເຊິ່ງເປັນສະບັບແປພາສາອັງກິດທີ່ເກົ່າແກ່; ແລະເພື່ອຮັກສາແນວຄິດ ແລະ ເຈດຕະນາ ລົ້ມຂອງຜູ້ຂຽນໃຫ້ໃກ້ຄຽງທີ່ສຸດ, ຜູ້ແປຈຶ່ງນຳໃຊ້ສະບັບແປຫຼາຍສະບັບ ດັ່ງທີ່ຂຽນໄວ້ຂ້າງລຸ່ມ, ເຊິ່ງ ມີການກຳກັບຊື່ ຫຼື ລະຫັດພຣະຄຳພີ ເພື່ອຜູ້ອ່ານຈະໄດ້ຮູ້ທີ່ມາຂອງຂໍ້ຄວາມທີ່ອ້າງອີງ. ບາງ ຄັ້ງ, ຖ້າຂໍ້ຄວາມນັ້ນມາຈາກສະບັບລາວບູຮານ ຫຼື ສະບັບພາສາໄທ, ກໍຈະມີຄຳວ່າ “ດັດແປງ ຈາກສະບັບ,” ເຊິ່ງການດັດແປງນັ້ນ ບໍ່ແມ່ນການປ່ຽນແປງຄວາມໝາຍ ແຕ່ເປັນການປັບປຸງພາສາ ໃຫ້ເຂົ້າກັບພາສາລາວໃນປັດຈຸບັນເທົ່າທີ່ສາມາດເຮັດໄດ້. ສະບັບແປພຣະຄຳພີທີ່ໃຊ້ໃນເຫຼັ້ມນີ້ປະກອບ ດ້ວຍ:

- **ພາສາລາວ**
  - ສະບັບຕີພິມ ຄ.ສ. 2012; (LO2012, ບໍ່ມີການກຳກັບ), [ສະບັບອອນລາຍມີການປັບປຸງຫຼັງຈາກການຕີພິມ ຂໍ້ຄວາມບາງບ່ອນຈຶ່ງແຕກຕ່າງກັນ; ຂໍ້ອ້າງອີງທີ່ບໍ່ມີການກຳກັບອີງໃສ່ສະບັບອອນລາຍ, ສ່ວນຂໍ້ອ້າງອີງທີ່ມີການກຳກັບ LO2012 ນັ້ນອີງໃສ່ສະບັບຕີພິມ .]
  - ສະບັບປັບປຸງໃໝ່ ຄ.ສ. 2023; (LCV), [ສະບັບນີ້ມີການປັບປຸງອອນລາຍກ່ອນຕີພິມເລັກນ້ອຍ ແຕ່ຍັງຄົງໃຊ້ຊື່ເດີມ.]
  - ພຣະຄຳພີໃໝ່ລຸ້ນເກົ່າ ຄ.ສ. 1972; (LO1972)
  - ສະບັບລາວບູຮານ; (ສະບັບລາວບູຮານ)
- **ພາສາໄທ**
  - ໄທຄິງເຈມ; (TKJV)
  - ສະບັບຕີພິມ ຄ.ສ. 1971; (TH1971)
  - ອະມະຕະທຳຮ່ວມສະໄໝ; (TNCV)
  - New Thai Version (ສະບັບແປໃໝ່); (NTV)
  - ສະບັບຕີພິມ ຄ.ສ. 2011; (THSV)
  - ສະບັບຕີພິມ ຄ.ສ. 1940; (TH1940)
  - ສະບັບອ່ານເຂົ້າໃຈງ່າຍ; (THA-ERV)
- **ພາສາອັງກິດ**
  - ສະບັບຄິງເຈມ; (KJV)

ການນຳໃຊ້ພາສາ

ພາສາເປັນເລື່ອງທີ່ໃກ້ຕົວ ແລະ ສຳນວນຂອງແຕ່ລະຄົນກໍອີງໃສ່ປະສົບການຊີວິດຂອງຜູ້ນັ້ນ. ຜູ້ແປພະຍາຍາມເລືອກຄຳທີ່ໜ້າອ່ານເຂົ້າໃຈງ່າຍ ຕາມຂໍ້ຈຳກັດຄວາມສາມາດຂອງຕົນ ໂດຍຄຳນຶງເຖິງເປົ້າໝາຍຂອງການແປ ຄືການໃຊ້ສຳນວນທີ່ຜູ້ອ່ານສາມາດເຂົ້າເຖິງຄວາມໝາຍ ແລະ ເຈດຕະນາລົມຂອງຜູ້ຂຽນໄດ້. ໃນເລື່ອງການສະກົດຊື່ພາສາຕ່າງປະເທດນັ້ນ ມີຄວາມຄິດເຫັນຕ່າງໆນາໆ; (ຍົກຕົວຢ່າງຄຳວ່າ “Adventist” ມີວິທີສະກົດເປັນພາສາລາວເຖິງ 96 ວິທີ!) ຜູ້ແປຈຶ່ງນຳຄວາມຄິດເຫັນຈາກຫຼາຍຄົນປະກອບເຂົ້າໃນການກຳນົດຕົວສະກົດ ໂດຍສ່ວນຫຼາຍໃຫ້ຊື່ພາສາຝຣັ່ງອອກສຽງຕາມພາສາຝຣັ່ງ ແລະ ຊື່ພາສາອັງກິດ ແລະ ພາສາອື່ນໃຫ້ອອກສຽງຕາມພາສາອັງກິດ. ສ່ວນການໃຊ້ຈຸດຈ້ຳນັ້ນ ກໍເປັນອີກເລື່ອງໜຶ່ງທີ່ມີຄວາມຄິດເຫັນທີ່ແຕກຕ່າງກັນຫຼາຍ. ຜູ້ແປຈຶ່ງພະຍາຍາມໃຊ້ຈຸດຈ້ຳຕາມລະບົບສາກົນໃຫ້ຖືກຕ້ອງເທົ່າທີ່ເຮັດໄດ້ ໂດຍຮູ້ວ່າ ມີຫຼາຍບ່ອນທີ່ຍັງບໍ່ໄດ້ມາດຕະຖານ.

ພາສາເໝືອນສິ່ງມີຊີວິດທີ່ມີການປ່ຽນແປງ ແລະ ພັດທະນາຢູ່ຕະຫຼອດເວລາ; ດັ່ງນັ້ນ, ຜູ້ຈັດພິມຈຶ່ງໃຊ້ຕົວສະກົດຕາມສະໄໝໃໝ່ເປັນສ່ວນໃຫຍ່ຕາມທີ່ປາກົດຢູ່ໃນວັດຈະນານຸກົມຕ່າງໆ ໂດຍມີຂໍ້ຍົກເວັ້ນຢູ່ບໍ່ເທົ່າໃດຄຳ: ເຊັ່ນມີການໃຊ້ຣາຊາສັບ ແລະ ຕົວ “ຣ ຫັນລີ້ນ” ຢູ່ໃນບາງຄຳ ແລະ ມີການ

ໃຊ້ຕົວ “ສ” ໃນພຣະນາມຂອງພຣະຄຣິສ, ຄຣິສຕຽນ ແລະ ຄຣິສຕະຈັກ ເພື່ອເປັນການຖວາຍກຽດ.

ຫາກຜູ້ໃດມີຄຳແນະນຳ ຫຼື ຂໍ້ສະເໜີ ກໍຂໍໃຫ້ສົ່ງມາຍັງ laoegw@proton.me ເພື່ອຈະໄດ້ນຳໄປປັບປຸງສະບັບອອນລາຍ ແລະ ດັດແກ້ຕົ້ນສະບັບສຳລັບການຕີພິມຄັ້ງຕໍ່ໄປ. ສ່ວນສະບັບອອນລາຍນັ້ນກໍສາມາດເຂົ້າອ່ານໄດ້ທີ່ www.laoegw.com/lo/GC.



ພຣະເຢຊູເບິ່ງນະຄອນເຢຣູຊາເລັມຈາກຍອດພູເຂົາໝາກກອກເທດໃນລະຫວ່າງເທດສະການປັດສະຄາ.

ເບິ່ງໜ້າ 2.

Image generated with AI (Google Gemini).

1

ຄວາມພິນາດຂອງນະຄອນເຢຣູຊາເລັມ

ພຣະເຢຊູຮ້ອງໄຫ້ເຖິງນະຄອນເຢຣູຊາເລັມ

“ໃນວັນນີ້ ຖ້າເຈົ້າໄດ້ຮູ້ເຖິງສິ່ງທີ່ເຮັດໃຫ້ເຈົ້າມີສັນຕິສຸກ ກໍເປັນການດີ ແຕ່ບັດນີ້ ສິ່ງເຫຼົ່ານັ້ນໄດ້ຖືກປິດບັງໄວ້ຈາກຕາຂອງເຈົ້າແລ້ວ. ດ້ວຍວ່າ ເວລາຈະມາເຖິງ ເມື່ອສັດຕູຂອງເຈົ້າຈະຂຸດຄູອ້ອມເຈົ້າ ແລະ ຕັນເຈົ້າໄວ້ທຸກດ້ານ. ພວກເຂົາຈະທຳລາຍເຈົ້າ ແລະ ລູກທັງຫຼາຍທີ່ຢູ່ນຳເຈົ້າໃຫ້ລົ້ງພຽງດິນ. ພວກເຂົາຈະບໍ່ປະກ້ອນຫີນໃຫ້ຊ້ອນທັບກັນໄວ້ພາຍໃນເຈົ້າ ເພາະວ່າເຈົ້າບໍ່ຮູ້ເວລາທີ່ພຣະເຈົ້າໄດ້ມາຢ້ຽມຢາມເຈົ້າ.” (ລູກາ 19:42–44[1]). *{GC 17.1}*

ພຣະເຢຊູ ເບິ່ງ ນະຄອນ ເຢຣູຊາເລັມ ຈາກ ຍອດ ພູເຂົາ ໝາກກອກເທດ ໃນ ລະຫວ່າງ ເທດສະການ ປັດສະຄາ. ພາບທີ່ເຫັນນັ້ນສວຍງາມ ແລະ ມີຄວາມສະຫງົບຢູ່ທົ່ວໄປ. ຄົນເຊື້ອສາຍຂອງຢາໂຄບຈາກ ທຸກທິດຕ່າງມາຮ່ວມຊຸມນຸມກັນທີ່ນັ້ນ ເພື່ອສະເຫຼີມສະຫຼອງເທດສະການແຫ່ງຊາດຄັ້ງໃຫຍ່ນີ້. ຜ້າເຕັ້ນ ຂອງຜູ້ມາຮ່ວມງານກະຈາຍໄປຕາມພູເຂົາອັນຂຽວສົດ ແລະ ມີສວນທີ່ຖືກຈັດໄວ້ເໝືອນຂັ້ນໄດຕາມ ເນີນພູ. ພຣະຣາຊວັງອັນສະຫງ່າຜ່າເຜີຍ ແລະ ກຳແພງສູງໃຫຍ່ຂອງເມືອງຫຼວງຢືນຢູ່ໂດດເດັ່ນ. ເບິ່ງຄື ບຸດຕີຊີໂອນ ແມ່ນນະຄອນເຢຣູຊາເລັມນັ້ນເອງກຳລັງກ່າວຢ່າງຫຍິ່ງຍະໂສວ່າ: “ເຮົາຢູ່ໃນ ຕຳແໜ່ງຣາຊີນີ, . . . ເຮົາຈະບໍ່ປະສົບຄວາມໂສກເສົ້າຈັກເທື່ອ.” (ພຣະນິມິດ 18:7). ນະຄອນເຢຣູຊາເລັມ ສວຍງາມ ແລະ ຊາວເມືອງຖືວ່າສະຫວັນໂຜດຕົນເອງ ດັ່ງເຊັ່ນໃນສະໄໝບູຮານ ທີ່ນັກກະວີຫຼວງເຄີຍ ຂັບຮ້ອງເພງສັນລະເສີນວ່າ: “ຊີໂອນພູຂອງພຣະເຈົ້າ ສູງສົ່ງ ແລະ ງາມຫຼາຍ ນະຄອນຂອງກະສັດ ຜູ້ຍິ່ງໃຫຍ່ ທີ່ນຳເອົາຄວາມຊົ່ນຊື່ນຍິນດີມາສູ່ທົ່ວທັງແຜ່ນດິນໂລກ.” (ເພງສັນລະເສີນ 48:2). ລຳແສງ ຕາເວັນທີ່ກຳລັງເຄື່ອນລັບຂອບຟ້າສະທ້ອນຈາກຫີນອ່ອນສີຂາວສະອາດ, ປະຕູຄຳ, ຫໍຄອຍ ແລະ ຍອດ ພຣະວິຫານຄຳຢ່າງເຈີດຈ້າແວວວາວ. ພຣະວິຫານງົດງາມ ບໍ່ມີບ່ອນຕຳໜິ ເປັນທີ່ພາກພູມໃຈຂອງ ຊາວຢິວທຸກຄົນ. ຈະມີລູກຫຼານຄົນໃດໃນອິດສະຣາເອນແດ່ ເມື່ອເຫັນພາບດັ່ງກ່າວແລ້ວຈະບໍ່ຮູ້ສຶກ ຊົ່ນບານໃຈ? ຈະມີຈັກຄົນທີ່ບໍ່ຊົ່ນເຊີຍ? ແຕ່ຄວາມຄິດຂອງພຣະເຢຊູແຕກຕ່າງກັນຫຼາຍ. “ຂະນະທີ່ ພຣະອົງສະເດັດມາໃກ້ ແລະ ເຫັນຕົວເມືອງແລ້ວ ພຣະອົງຊົງຮ້ອງໄຫ້ສຽງດັງ.” (ລູກາ 19:41 ແປຈາກ ພາສາກຣີກ). ທ່າມກາງຄວາມຊົ່ນຊື່ນຍິນດີຂອງຄົນທັງຫຼາຍທີ່ຮ່ວມຂະບວນສະເດັດ ຂະນະທີ່ພຣະອົງ ສະເດັດເຂົ້າໄປໃນນະຄອນຢ່າງຜູ້ມີໄຊ, ທ່າມກາງຄົນໂບກກ້ານຕານ ແລະ ສຽງໂຮ່ຮ້ອງ “ໂຮຊັນນາ” ທີ່ ກ້ອງກັງວານຢູ່ຕາມເນີນພູ, ຄົນຫຼາຍພັນຄົນຮ້ອງສຽງດັງຂຶ້ນ ເພື່ອປະກາດແຕ່ງຕັ້ງພຣະເຢຊູໃຫ້ເປັນ ກະສັດ. ແຕ່ໃນເວລາດຽວກັນນັ້ນກໍເປັນທີ່ໜ້າປະຫຼາດໃຈທີ່ພຣະຜູ້ໄຖ່ຂອງໂລກໄດ້ມີຄວາມທຸກໂສກຢ່າງ ກະທັນຫັນ. ພຣະບຸດຂອງພຣະເຈົ້າ ຄືຜູ້ທີ່ພຣະເຈົ້າຊົງໃຊ້ມາຕາມພຣະສັນຍາ ຜູ້ທີ່ຊະນະຄວາມ

[1] ອ່ານວ່າ ລູກາ ບົດທີສິບເກົ້າ ຂໍ້ສີ່ສິບສອງເຖິງສີ່ສິບສີ່.

ຕາຍ ແລະ ຄືນຊີວິດໃຫ້ແກ່ຜູ້ທີ່ລ່ວງລັບໄປນັ້ນ, ພຣະອົງຊົງຮ້ອງໄຫ້ສຽງດັງ ດ້ວຍຄວາມທຸກໃຈຢ່າງ ຮຸນແຮງເຫຼືອທົນ. {GC 17.2}

ແຕ່ພຣະເຢຊູບໍ່ໄດ້ຮ້ອງໄຫ້ເພື່ອພຣະອົງເອງ ເຖິງແມ່ນວ່າພຣະອົງຊົງຮູ້ດີວ່າພຣະອົງກຳລັງກ້າວ ໄປສູ່ທີ່ໃດ. ເບື້ອງໜ້າຄື ສວນເຄັດເຊມາເນ ສະຖານທີ່ທີ່ພຣະອົງຈະຕ້ອງແບກຮັບເອົາຄວາມທຸກ-ທໍລະມານ ແລະ ປະຕູແກະ ບ່ອນທີ່ຄົນອິດສະຣາເອນນຳສັດມາຖວາຍເປັນເຄື່ອງບູຊາມາຕະຫຼອດ ຫຼາຍສະຕະວັດ. ປະຕູນີ້ເອງຈະຖືກເປີດອອກສຳລັບພຣະເຢຊູເມື່ອພຣະອົງຈະເປັນ “ດັ່ງລູກແກະ ພວມຖືກນຳໄປຂ້າ.” (ເອຊາຢາ 53:7). ຫ່າງອອກໄປບໍ່ໄກຄືພູເຂົາຄານວາຣີ ສະຖານທີ່ທີ່ພຣະອົງ ຈະຖືກຄຶງໄວ້ເທິງໄມ້ກາງແຂນ. ເສັ້ນທາງທີ່ພຣະຄຣິສຈະຕ້ອງກ້າວຢ່າງໄປໃນອີກບໍ່ດົນນັ້ນຈະມືດມົວ ຢ່າງໜ້າຢ້ານ ເມື່ອພຣະອົງຈະຖວາຍພຣະອົງເອງເປັນເຄື່ອງບູຊາໄຖ່ບາບ. ມີເງົາມືດທອດຢູ່ເໜືອ ພຣະອົງ ໃນເວລາທີ່ຄົນອື່ນກຳລັງຊົມຊື່ນຍິນດີ, ແຕ່ເງົາມືດດັ່ງກ່າວ ບໍ່ໄດ້ເກີດຈາກການຄຳນຶງເຖິງ ເຫດການຮ້າຍທີ່ຈະເກີດຂຶ້ນກັບພຣະອົງ. ແມ່ນແຕ່ການສັງຫອນເຖິງຄວາມທຸກທໍລະມານທີ່ເກີນມະນຸດ ຈະທົນໄດ້ ກໍບໍ່ສາມາດເຮັດໃຫ້ພຣະອົງຜູ້ທີ່ບໍ່ເຄີຍເຫັນແກ່ຕົວ ເກີດຄວາມເສົ້າໝອງໄດ້. ແຕ່ພຣະອົງ ໂສກເສົ້າ ເນື່ອງຈາກຄົນໃນນະຄອນເຢຣູຊາເລັມຈຳນວນຫຼວງຫຼາຍ ທີ່ກຳລັງຈະພິນາດໄປຍ້ອນຄວາມ ມືດບອດ ແລະ ຄວາມດື້ດ້ານ ເຖິງແມ່ນວ່າ ພຣະອົງສະເດັດມາເພື່ອອວຍພອນ ແລະ ຊ່ວຍຄົນເຫຼົ່ານີ້ ໃຫ້ລອດກໍຕາມ. {GC 18.1}

ຈາກບ່ອນທີ່ພຣະອົງຢືນຢູ່ນັ້ນ ກໍສາມາດເຫັນສະຖານທີ່ສຳຄັນແຫ່ງປະຫວັດສາດກວ່າ 1,000 ປີ, ຄື ສະຖານທີ່ແຫ່ງການພິທັກຮັກສາ ແລະ ຄວາມໂປດປານຂອງພຣະເຈົ້າທີ່ມີຕໍ່ຊົນຊາດທີ່ພຣະອົງຊົງ ເລືອກ. ພູເຂົາໂມຣີຢາ ເປັນສະຖານທີ່ທີ່ ອີຊາກ ບຸດແຫ່ງພັນທະສັນຍາຖືກມັດໄວ້ເທິງແທ່ນບູຊາ ໂດຍບໍ່ດິ້ນສູ້ ເຊິ່ງເປັນສັນຍະລັກເລັ່ງເຖິງການຖວາຍຕົວເປັນເຄື່ອງບູຊາຂອງພຣະບຸດພຣະເຈົ້າ. ເທິງ ພູເຂົາໂມຣີຢານັ້ນເອງ ພຣະເຈົ້າຊົງຢືນຢັນພຣະສັນຍາເລື່ອງພຣະເມຊີອາຕໍ່ບິດາແຫ່ງຄວາມເຊື່ອ ອັນ ເປັນພຣະສັນຍາແຫ່ງພຣະພອນອັນຮຸ່ງເຮືອງ. (ເບິ່ງ ປະຖົມມະການ 22:9, 16–18). ສະຖານທີ່ ດັ່ງກ່າວ ຍັງເປັນບ່ອນທີ່ກະສັດດາວິດຖວາຍເຄື່ອງບູຊາທີ່ລານນວດເຂົ້າຂອງອາໂຣນາ ເພື່ອດາບ ຂອງທູດມໍຣະນະຈະຢຸດສັງຫານປະຊາຊົນ. (ເບິ່ງ 1 ຂ່າວຄາວ 21). ການຖວາຍບູຊາໃນຄັ້ງນັ້ນ ເປັນສັນຍະລັກອັນເໝາະສົມ ທີ່ເລັ່ງເຖິງພຣະຜູ້ຊ່ວຍໃຫ້ລອດ ຜູ້ຖວາຍພຣະອົງເອງເປັນເຄື່ອງບູຊາໄຖ່ ບາບ ແລະ ເຮັດໜ້າທີ່ເປັນຄົນກາງລະຫວ່າງມວນມະນຸດທີ່ຫຼົງຜິດກັບພຣະຜູ້ເປັນເຈົ້າ. ນະຄອນ ເຢຣູຊາເລັມເຄີຍໄດ້ຮັບກຽດຈາກພຣະເຈົ້າເໜືອເມືອງອື່ນໃດເທິງແຜ່ນດິນໂລກ. ຕາມທີ່ເພງສັນລະເສີນ 132:13 ຂຽນໄວ້ວ່າ: “ອົງພຣະຜູ້ເປັນເຈົ້າໄດ້ເລືອກເຟັ້ນເອົາພູເຂົາຊີໂອນ ພຣະອົງຕ້ອງການເຮັດໃຫ້ພູ ນີ້ເປັນທີ່ປະທັບຂອງພຣະອົງ.” ບັນດາຜູ້ເຜີຍພຣະທຳໄດ້ປະກາດຕັກເຕືອນມາເປັນເວລາຫຼາຍຍຸກຫຼາຍ ສະໄໝໃນນະຄອນນີ້. ພວກປະໂຣຫິດເຄີຍແກວ່ງໝໍ້ຂາງເຄື່ອງຫອມໄປມາຕາມພິທີໃນນະຄອນນີ້ເຊັ່ນ ກັນ ແລະ ຄວັນເຄື່ອງຫອມນັ້ນ ໄດ້ລອຍຂຶ້ນສູ່ເບື້ອງພຣະພັກພຣະເຈົ້າ ພ້ອມດ້ວຍຄຳອະທິຖານຂອງ ຜູ້ເຂົ້າຮ່ວມນະມັດສະການ. ພວກເຂົາຍັງຖວາຍເລືອດຂອງລູກແກະ ທີ່ຖືກນຳມາຂ້າຢູ່ທຸກມື້ທຸກວັນ ອັນ ເປັນການເລັ່ງເຖິງພຣະຜູ້ໄຖ່. ທີ່ນັ້ນ ສະຫງ່າຣາສີຂອງອົງພຣະຜູ້ເປັນເຈົ້າປາກົດຢູ່ເໜືອພຣະທີ່ນັ່ງແຫ່ງ ພຣະກະລຸນາ ເປັນການສຳແດງວ່າພຣະອົງສະຖິດຢູ່. ຈາກບ່ອນນັ້ນບໍ່ໄກເປັນທີ່ຕັ້ງຂອງຖານຂັ້ນໄດ ໃນຄວາມຝັນຂອງຢາໂຄບ ທີ່ເຊື່ອມແຜ່ນດິນໂລກເຂົ້າກັບສະຫວັນ ຄືຂັ້ນໄດທີ່ຢາໂຄບຝັນເຫັນບັນດາ ທູດສະຫວັນຂອງພຣະເຈົ້າ ຂຶ້ນໆ ລົງໆ ແລະ ເປັນຂັ້ນໄດທີ່ເປີດທາງໄປສູ່ສະຖານທີ່ສັກສິດທີ່ສຸດ ໃຫ້ແກ່ມະນຸດ. (ເບິ່ງ ປະຖົມມະການ 28:12, ໂຢຮັນ 1:51, ເຮັບເຣີ 9:3). ຖ້າຫາກຊົນຊາດ ອິດສະຣາເອນໄດ້ຮັກສາຄວາມຈົງຮັກພັກດີທີ່ມີຕໍ່ສະຫວັນແລ້ວ ນະຄອນເຢຣູຊາເລັມກໍຄົງຈະດຳລົງຢູ່

ຕະຫຼອດໄປໃນຖານະເມືອງທີ່ພຣະເຈົ້າຊົງເລືອກສັນ. (ເຢເຣມີຢາ 17:21–25). ແຕ່ປະຫວັດສາດຂອງຊົນຊາດທີ່ພຣະເຈົ້າຊົງໂປດປານນັ້ນ ມີແຕ່ເລື່ອງຄວາມບໍ່ສັດຊື່ ແລະ ຄວາມດື້ດ້ານຫົວແຂງ. ພວກເຂົາໄດ້ໝິ່ນປະໝາດຕໍ່ພຣະຄຸນຂອງສະຫວັນ, ໄດ້ນຳໃຊ້ສິດທິພິເສດໃນທາງທີ່ຜິດ ແລະ ເມີນເສີຍຕໍ່ໂອກາດຕ່າງໆ. *{GC 18.2}*

ພາລະກິດແຫ່ງຄວາມເມດຕາ

ເຖິງແມ່ນວ່າຄົນອິດສະຣາເອນໄດ້ "ຫົວເຍາะເຍີ້ຍໃສ່ພວກຜູ້ນຳຂ່າວຂອງພຣະເຈົ້າ ໂດຍບໍ່ຍອມຮັບເອົາຖ້ອຍຄຳຂອງພຣະອົງ ແລະ ຫົວຂວັນໃສ່ຜູ້ທຳນວາຍຂອງພຣະອົງ" (2 ຂ່າວຄາວ 36:16), ແຕ່ພຣະອົງຍັງຄົງເມດຕາກະລຸນາ ແລະ ອົດທົນຕໍ່ພວກເຂົາ. ພຣະອົງຍັງຄົງເປັນພຣະເຈົ້າຜູ້ "ເຕັມໄປດ້ວຍຄວາມເມດຕາ ແລະ ເຕັມລົ້ນດ້ວຍພຣະຄຸນ ຜູ້ບໍ່ຮ້າຍງ່າຍ ແລະ ຜູ້ສຳແດງຄວາມຮັກອັນໝັ້ນຄົງ ແລະ ສັດຊື່." (ອົບພະຍົບ 34:6). ພຣະອົງຍັງຄົງຮຽກຮ້ອງໃຫ້ຄົນອິດສະຣາເອນກັບໃຈ ເຖິງແມ່ນວ່າ ພວກເຂົາໄດ້ປະຕິເສດພຣະອົງຢ່າງຕໍ່ເນື່ອງກໍຕາມ. ດ້ວຍຄວາມຮັກອັນຍິ່ງໃຫຍ່ເກີນກວ່າຄວາມຮັກຂອງພໍ່ທີ່ມີຕໍ່ລູກ, ພຣະເຈົ້າຍັງໄດ້ "ສືບຕໍ່ໃຊ້ຜູ້ທຳນວາຍຫຼາຍຄົນມາເຕືອນປະຊາຊົນຂອງພຣະອົງ ເພາะພຣະອົງບໍ່ປະສົງຈະທຳລາຍພວກເຂົາ ແລະ ທີ່ສະຖິດຂອງພຣະອົງ." (2 ຂ່າວຄາວ 36:15). ເມື່ອການທັກທ້ວງ, ການຕັກເຕືອນ ແລະ ການຮຽກຮ້ອງໃຫ້ກັບໃຈບໍ່ໄດ້ຜົນ, ພຣະເຈົ້າຊົງໃຊ້ພຣະບຸດຂອງພຣະອົງເປັນຂອງປະທານທີ່ດີທີ່ສຸດຈາກສະຫວັນ. ຕາມຄວາມຈິງແລ້ວພຣະອົງປະທານສະຫວັນທັງໝົດຜ່ານພຣະບຸດ. *{GC 19.1}*

ພຣະເຈົ້າຊົງໃຊ້ພຣະບຸດຂອງພຣະອົງມາ ເພື່ອຮຽກຮ້ອງຊາວເມືອງທີ່ແຂງກະດ້າງໃຫ້ກັບໃຈໃໝ່. ພຣະຄຣິສເອງ ຄືຜູ້ທີ່ນຳຄົນອິດສະຣາເອນອອກຈາກປະເທດເອຢິບ ແລະ ຂັບໄລ່ຊົນຊາດທັງຫຼາຍທີ່ບໍ່ນັບຖືພຣະເຈົ້າອອກໄປຕໍ່ໜ້າພວກເຂົາ. ພຣະອົງຊົງນຳຄົນອິດສະຣາເອນໃຫ້ລົງຫຼັກປັກຖານໃນແຜ່ນດິນທີ່ອຸດົມສົມບູນ ດັ່ງປູກເຄືອອະງຸ່ນອັນແຂງແຮງໄວ້ໃນດິນດີ. (ເບິ່ງ ເພງສັນລະເສີນ 80:8). ພຣະອົງຊົງປົກປ້ອງຄຸ້ມຄອງເຄືອອະງຸ່ນນັ້ນ ແລະ ຊົງໃຊ້ຄົນງານຂອງພຣະອົງໄປ ເພື່ອທະນຸບຳລຸງມັນໄວ້. ແລ້ວພຣະອົງຊົງຖາມວ່າ: "ມີອັນໃດແດ່ທີ່ຂ້ອຍບໍ່ໄດ້ເຮັດສຳລັບສວນນີ້?" (ເອຊາຢາ 5:1–4). ແຕ່ແທນທີ່ຈະໄດ້ໝາກອະງຸ່ນດີຕາມທີ່ຄາດໄວ້ ກໍກັບໄດ້ໝາກອະງຸ່ນສົ້ນ. ຢ່າງໃດກໍຕາມ, ພຣະອົງຍັງຄົງຫວັງວ່າຈະໄດ້ໝາກອະງຸ່ນດີ ຈຶ່ງສະເດັດມາດ້ວຍພຣະອົງເອງ ເພື່ອຊ່ວຍໃຫ້ສວນອະງຸ່ນຂອງພຣະອົງບໍ່ຕ້ອງຖືກທຳລາຍ. ພຣະອົງຊົງເບິ່ງແຍງເອົາໃຈໃສ່ເຄືອອະງຸ່ນຂອງພຣະອົງ ແລະ ພະຍາຍາມຊ່ວຍເຄືອອະງຸ່ນທີ່ພຣະອົງຊົງປູກໄວ້ຢ່າງບໍ່ຮູ້ອິດຮູ້ເມື່ອຍ. *{GC 19.2}*

ພຣະບຸດຂອງພຣະເຈົ້າເປັນຄວາມສະຫວ່າງ; ສະຫງ່າຣາສີມາຈາກພຣະອົງ. ພຣະອົງສະເດັດເຂົ້າ - ອອກ ທ່າມກາງຄົນຂອງພຣະອົງເປັນເວลาสามปี. "ພຣະອົງໄປທຸກຫົນທຸກແຫ່ງ ເຮັດຄຸນງາມຄວາມດີ ແລະ ຊົງໂຜດຮັກສາທຸກຄົນທີ່ຖືກອຳນาดของมารร้ายบงการ." ພຣະອົງປິ່ນປົວຄົນລະທົ່ມໃຈ, ປะกาดอิดสะหฺตะพาบแก่คົนที่ถืกจองจำ, ปิ่นปົวคົนตาบอดใຫ้เห็นรุ่ง ແລะ ຄົນຫູໜວກໃຫ້ໄດ້ຍິນ, ຊ່ວຍຄົນຂາພິการใຫ้ย่างได้, ຮັກสาคົนที่เป็นพะยาดฮ้ายใຫ้หายสะอาด, ใຫ้คົนที่ตายแล้วฟื้นคืนชีวิด ແລะ ปะกาดข่าวดีแก่คົนยากจน. (เบิ่ง กิดจะการ 10:38; ลูกา 4:18; ມັດທາຍ 11:5). ພຣະອົງຊົງกะลุนาຮฺยกเอิ้นทุกชົนชั้นว่า: "บันดาผู้ที่เฮัดการหนักหฺน่วง ແລะ แบกพาละหนัก จົ่งมาหาเธิา ແລะ เธิาจะใຫ้พวกเจ้าได้รับความเชิาเมื่อย." (ມັດທາຍ 11:28). *{GC 20.1}*

ຄົນອິດສະຣາເອນໄດ້ “ຕອບສະໜອງໂດຍຄວາມຊົ່ວແທນຄວາມດີ ແລະ ໃຊ້ຄວາມກຽດຊັງຕອບແທນຄວາມຮັກ.” (ເພງສັນລະເສີນ 109:5). ເຖິງຢ່າງນັ້ນກໍດີ, ພຣະອົງຍັງຄົງສືບຕໍ່ພາລະກິດແຫ່ງຄວາມເມດຕາ ໂດຍບໍ່ຍອມທໍ້ຖອຍ. ພຣະອົງບໍ່ເຄີຍປະຕິເສດຄົນທີ່ສະແຫວງຫາພຣະຄຸນຂອງພຣະອົງ. ພຣະເຢຊູສະເດັດໄປບ່ອນຕ່າງໆ ຄືກັບຄົນບໍ່ມີເຮືອນຢູ່. ພຣະອົງທົນຕໍ່ຄວາມຍາກຈົນ ແລະ ການດູຖູກຂອງຄົນອື່ນເປັນປະຈຳທຸກວັນ, ທັງໝົດນີ້ ກໍເພື່ອແບ່ງເບົາພາລະ ແລະ ຊ່ວຍເຫຼືອຄົນທັງຫຼາຍໃນເລື່ອງທີ່ຈຳເປັນ ແລະ ຂໍຮ້ອງພວກເຂົາໃຫ້ຮັບເອົາຂອງປະທານແຫ່ງຊີວິດ. ເຖິງແມ່ນວ່າຄົນໃຈດີດ້ານຈະປະຕິເສດຄວາມເມດຕາຂອງພຣະອົງ, ແຕ່ພຣະເຢຊູຊົງຮັກ ແລະ ອີ່ຕົນສົ່ງສານຫຼາຍຂຶ້ນດ້ວຍຄວາມຮັກທີ່ເກີນບັນລະຍາຍ. ແຕ່ຄົນອິດສະຣາເອນໄດ້ຫັນຫຼັງໃສ່ພຣະອົງຜູ້ເປັນມິດແທ້ ແລະ ເປັນຜູ້ທີ່ສາມາດຊ່ວຍເຫຼືອແຕ່ຜູ້ດຽວ. ພວກເຂົາໄດ້ດູຖູກການວິງວອນຂໍຮ້ອງດ້ວຍຄວາມຮັກຂອງພຣະອົງ, ໄດ້ປະຕິເສດຄຳສັ່ງສອນ, ແຖມຍັງເຍາะເຍີ້ຍຄຳຕັກເຕືອນຂອງພຣະອົງ. {GC 20.2}

ເວລາແຫ່ງຄວາມຫວັງກຳລັງຈະຜ່ານພົ້ນໄປ; ໂອກາດທີ່ຈະໄດ້ຮັບການໃຫ້ອະໄພໃກ້ຈະໝົດລົງ; ຈອກແຫ່ງພຣະພິໂຣດຂອງພຣະເຈົ້າ ທີ່ອົດທົນໄວ້ດົນນານ ໃກ້ຈະເຕັມແລ້ວ. ຄວາມຫ່າງເຫີນຈາກພຣະເຈົ້າ ແລະ ຄວາມດື້ດ້ານເປັນດັ່ງກ້ອນເມກທີ່ຄ່ອຍໆກໍ່ຕົວຂຶ້ນຕາມຍຸກສະໄໝຕ່າງໆ, ພໍເຖິງເວລານັ້ນກ້ອນເມກດັ່ງກ່າວ ກໍມືດດຳເຕັມທີ. ພະຍຸໃກ້ຈະພັດຖະຫຼົ່ມໃສ່ຊົນຊາດອິດສະຣາເອນທີ່ຜິດບາບ. ຊ້ຳບໍ່ໜຳ, ພວກເຂົາດູຖູກ, ຂົ່ມເຫັງ, ປະຕິເສດ ແລະ ພ້ອມຈະຄຶງພຣະອົງໄວ້ເທິງໄມ້ກາງແຂນ ເຖິງແມ່ນວ່າ ພຣະອົງຄືຜູ້ດຽວທີ່ສາມາດຊ່ວຍເຫຼືອພວກເຂົາໃຫ້ພົ້ນຈາກຄວາມຈິບຫາຍທີ່ຈວນຈະເກີດຂຶ້ນກໍຕາມ. ການເປັນທີ່ໂປດປານຂອງພຣະເຈົ້າ ໄດ້ສິ້ນສຸດລົງສຳລັບຊົນຊາດອິດສະຣາເອນ ໃນວັນທີ່ພຣະຄຣິສຖືກຄຶງໄວ້ທີ່ໄມ້ກາງແຂນແຫ່ງຄານວາຣີ. ການທີ່ມະນຸດຄົນໃດຈະພິນາດ ກໍເປັນການສູນເສຍທີ່ຍິ່ງໃຫຍ່ເກີນກວ່າຊັບສົມບັດຂອງໂລກທັງໝົດ, ແຕ່ໃນຂະນະທີ່ເບິ່ງນະຄອນເຢຣູຊາເລັມ ພຣະອົງເຫັນຄວາມພິນາດຂອງຄົນໝົດທັງເມືອງ ແລະ ຄົນທັງຊາດ ຄືນະຄອນ ແລະ ຊົນຊາດທີ່ພຣະເຈົ້າເຄີຍເລືອກໄວ້ໃຫ້ເປັນດັ່ງສົມບັດພິເສດຂອງພຣະອົງ. {GC 20.3}

ສັນຍະລັກແຫ່ງຄວາມແຂງກະດ້າງ

ຜູ້ເຜີຍພຣະທຳຂອງພຣະເຈົ້າເຄີຍຮ້ອງໄຫ້ເປັນທຸກໃຈ ຍ້ອນຄົນອິດສະຣາເອນຫ່າງເຫີນຈາກພຣະອົງ ແລະ ຍ້ອນຄວາມພິນາດທີ່ເກີດຂຶ້ນເພາะຄວາມບາບຂອງພວກເຂົາ. ເຢເຣມີຢາປາຖະໜາໃຫ້ຕາເປັນດັ່ງນ້ຳພຸ ເພື່ອຈະໄດ້ຮ້ອງໄຫ້ທັງເວັນທັງຄືນເພື່ອຝູງແກะຂອງພຣະເຈົ້າ ກໍຄືຄົນຮ່ວມຊາດຂອງເພິ່ນທີ່ຖືກຂ້າຟັນຕາຍ ແລະ ຖືກນຳໄປເປັນຂະເລີຍ. (ເບິ່ງ ເຢເຣມີຢາ 9:1; 13:17). ຜູ້ເຜີຍພຣະທຳເຫຼົ່ານັ້ນ ຮັບຮູ້ເຖິງເຫດການລ່ວງໜ້າບໍ່ເທົ່າໃດປີ, ແຕ່ຄວາມທຸກຂອງພວກເຂົາບໍ່ສາມາດປຽບທຽບກັບຄວາມທຸກຂອງພຣະເຢຊູ ຜູ້ຮູ້ແຈ້ງເຫັນຈິງເຖິງເຫດການທີ່ຈະເກີດຂຶ້ນໃນທຸກຍຸກທຸກສະໄໝຕໍ່ຈາກນັ້ນ. ພຣະອົງເຫັນທູດມໍຣະນະຍົກດາບຕໍ່ສູ້ນະຄອນ ອັນເປັນທີ່ສະຖິດຂອງພຣະເຢໂຮວາເປັນເວລາດົນນານ. ພຣະອົງຢືນຢູ່ທີ່ພູເຂົາໝາກກອກເທດ ເຊິ່ງເປັນບ່ອນດຽວກັນທີ່ແມ່ທັບ ຕີໂຕ ກັບກອງທັບຂອງເພິ່ນຈະຕັ້ງຄ້າຍຢູ່ໃນເວລາຕໍ່ມາ. ພຣະອົງເບິ່ງຂ້າມຮ່ອມພູໄປຍັງອາຄານຕ່າງໆຂອງພຣະວິຫານ. ນ້ຳຕາຫຼັ່ງໄຫຼໃນຂະນະທີ່ພຣະອົງຮູ້ເຫັນລ່ວງໜ້າວ່າ ກອງທັບຄົນຕ່າງຊາດຈະມາລ້ອມກຳແພງເມືອງ ພ້ອມທັງໄດ້ຍິນເຖິງສຽງດັງພືບພັບພືບພັບຂອງທະຫານຈຳນວນຫຼວງຫຼາຍທີ່ຈະຍ່າງເຂົ້າມາເພື່ອເຮັດເສິກສົງຄາມ, ໄດ້ຍິນສຽງແມ່ ແລະ ບັນດາລູກຮ້ອງຫາເຂົ້າຈີ່ໃນນະຄອນທີ່ຖືກລ້ອມໄວ້, ທັງໄດ້ເຫັນພຣະວິຫານ, ພຣະຣາຊວັງ ແລະ ຫໍຄອຍຖືກໄຟໄໝ້ໃຫ້ວອດວາຍ ເຫຼືອແຕ່ຄວັນທີ່ລອຍຂຶ້ນຈາກຊາກອາຄານທີ່ພັງລົງ. {GC 21.1}

ພຣະອົງຮູ້ແຈ້ງເຖິງຍຸກສະໄໝຕ່າງ ໆ ໃນອະນາຄົດ ແລະ ເຫັນຄົນແຫ່ງພັນທະສັນຍາ ຖືກກະຈາຍ ໄປຕາມປະເທດຕ່າງ ໆ ໃນໂລກ ເໝືອນຊາກເຮືອຖືກພັດຂຶ້ນຝັ່ງອັນເປົ່າປ່ຽວ. ການລົງໂທດນະຄອນ ເຢຣູຊາເລັມທີ່ກຳລັງຈະຕົກສູ່ຊາວນະຄອນໃນຄັ້ງນີ້ ປຽບເໝືອນການຈິບເຫຼົ້າແວງ ຈາກຈອກແຫ່ງ ພຣະພິໂຣດຂອງພຣະເຈົ້າ ແລະ ເມື່ອເຖິງເວລາແຫ່ງການພິພາກສາຄັ້ງສຸດທ້າຍແລ້ວນັ້ນ ນະຄອນ ເຢຣູຊາເລັມຈະຕ້ອງດື່ມໃຫ້ໝົດພ້ອມດ້ວຍຂີ້ຊາທີ່ຢູ່ກົ້ນຈອກນຳ. ພຣະເຢຊູເຕັມໄປດ້ວຍຄວາມເມດຕາ ແລະ ຄວາມຮັກອັນຍິ່ງໃຫຍ່ຈຶ່ງກ່າວດ້ວຍຄວາມໂສກເສົ້າເສຍໃຈວ່າ: “ໂອ ເຢຣູຊາເລັມ ເຢຣູຊາເລັມ ເອີຍ ເຈົ້າຂ້າບັນດາຜູ້ທຳນວາຍ ເອົາຫີນແກວ່ງໃສ່ພວກຜູ້ທຳນວາຍທີ່ໃຊ້ມາຫາເຈົ້າ. ຫຼາຍເທື່ອ ແລ້ວ ເຮົາຢາກຈະຮວບຮວມເອົາປະຊາຊົນທັງໝົດຂອງເຈົ້າໄວ້ ເໝືອນດັ່ງແມ່ໄກ່ຮວບຮວມລູກຂອງຕົນ ໄວ້ໃຕ້ປີກ ແຕ່ເຈົ້າບໍ່ຍິນຍອມ.” (ມັດທາຍ 23:37). ພວກເຈົ້າເປັນຊົນຊາດທີ່ໄດ້ຮັບພຣະພອນຫຼາຍ ກວ່າຊົນຊາດທັງຫຼາຍໃນໂລກ. ເຮົາຢາກໃຫ້ພວກເຈົ້າຮູ້ເວລາທີ່ພຣະເຈົ້າມາຢ້ຽມຢາມພວກເຈົ້າ, ທ້າຍາກ ໃຫ້ພວກເຈົ້າຮູ້ວ່າ ແມ່ນສິ່ງໃດທີ່ເຮັດໃຫ້ພວກເຈົ້າມີຄວາມສະຫງົບສຸກ. ເຮົາໄດ້ຍັບຢັ້ງທູດແຫ່ງຄວາມ ຍຸຕິທຳໄວ້ ແລະ ໄດ້ຮ້ອງຂໍໃຫ້ພວກເຈົ້າຖິ້ມໃຈເກົ່າເອົາໃຈໃໝ່ເສຍກ່ອນ ແຕ່ກໍບໍ່ໄດ້ຜົນ. ພວກເຈົ້າບໍ່ ພຽງແຕ່ປະຕິເສດຜູ້ຮັບໃຊ້, ຜູ້ເຜີຍພຣະທຳ ແລະ ຕົວແທນທີ່ພຣະເຈົ້າໃຊ້ມາເທົ່ານັ້ນ ແຕ່ໄດ້ປະຕິເສດ ພຣະຜູ້ໄຖ່ ເຊິ່ງເປັນອົງບໍຣິສຸດແຫ່ງອິດສະຣາເອນ, ຖ້າຫາກວ່າພວກເຈົ້າຖືກທຳລາຍ ພວກເຈົ້າຕ້ອງ ຮັບຜິດຊອບເອົາເອງ. “ເຈົ້າທັງຫຼາຍກໍຍັງບໍ່ຢາກມາຫາເຮົາເພື່ອຈະໄດ້ຊີວິດ.” (ໂຢຮັນ 5:40). {GC 21.2}

ພຣະເຢຊູຄຣິສເຫັນວ່າ ນະຄອນເຢຣູຊາເລັມເປັນສັນຍະລັກຂອງໂລກ ທີ່ແຂງກະດ້າງ ເພາະ ມີຈິດໃຈດື້ດ້ານ ແລະ ບໍ່ເຊື່ອໃນພຣະເຈົ້າ ຄືເປັນສັນຍະລັກຂອງໂລກທີ່ກຳລັງແລ່ນໄປສູ່ການຖືກ ລົງໂທດຢ່າງໄວວາ. ຄວາມທຸກເວດທະນາຂອງມະນຸດສະໂລກທີ່ຫຼົງໄຫຼໃນຄວາມບາບໄດ້ບີບຮັດຈິດໃຈ ຂອງພຣະເຢຊູ ຈົນພຣະອົງຮ້ອງອອກມາຢ່າງຂົມຂື່ນ. ພຣະອົງເຫັນຮ່ອງຮອຍນ້ຳຕາ ແລະ ຄາບ ເລືອດທີ່ໃຊ້ບັນທຶກປະຫວັດສາດຄວາມທຸກເວດທະນາຂອງມະນຸດ ແລະ ຮູ້ສຶກເມດຕາສົງສານຢ່າງບໍ່ ມີຂອບເຂດຕໍ່ຄົນທີ່ຕ້ອງທົນທຸກລຳບາກເຫຼົ່ານັ້ນ. ພຣະອົງຊົງປາຖະໜາທີ່ຈະບັນເທົາຄວາມທຸກໃຫ້ໝົດ ທຸກຄົນ. ເຖິງຢ່າງໃດກໍຕາມ ພຣະອົງບໍ່ສາມາດຢຸດຢັ້ງຄວາມທຸກເວດທະນາຂອງມະນຸດສະໂລກທັງໝົດ ໄດ້ ເພາະວ່າຄົນສ່ວນຫຼາຍຈະບໍ່ມາຫາພຣະອົງເພື່ອຮັບຄວາມຊ່ວຍເຫຼືອ. ພຣະອົງພ້ອມຈະສະຫຼະຊີວິດ ຂອງພຣະອົງ ເພື່ອນຳຄວາມລອດພົ້ນມາເຖິງມືຂອງຄົນທັງຫຼາຍ ແຕ່ຈະມີໜ້ອຍຄົນມາຫາພຣະອົງເພື່ອ ຈະໄດ້ຊີວິດ. {GC 22.1}

ອົງຜູ້ຊົງສະຫງ່າຣາສີແຫ່ງຟ້າສະຫວັນຮ້ອງໄຫ້! ພຣະບຸດຂອງພຣະເຈົ້າຜູ້ສູງສຸດເປັນທຸກໃຈ ແລະ ກົ້ມລົງດ້ວຍຄວາມໂສກເສົ້າ! ພາບດັ່ງກ່າວເຮັດໃຫ້ທົ່ວທັງສະຫວັນປະຫຼາດໃຈ, ເປັນພາບທີ່ສຳແດງ ໃຫ້ເຮົາຮູ້ວ່າ ຄວາມບາບເປັນສິ່ງທີ່ເສື່ອມເສຍຢ່າງຮ້າຍແຮງ ແລະ ສະແດງໃຫ້ເຫັນວ່າ ການຊ່ວຍ ຄົນຜິດບາບໃຫ້ລອດພົ້ນຈາກຜົນຂອງການລະເມີດຕໍ່ພຣະບັນຍັດຂອງພຣະເຈົ້າ ເປັນເລື່ອງທີ່ຍາກ ອີ່ຫຼີ; ເຖິງແມ່ນວ່າພຣະເຈົ້າຊົງຣິດທານຸພາບສູງສຸດ ແຕ່ເລື່ອງນີ້ຍັງເປັນສິ່ງທີ່ຍາກສຳລັບພຣະອົງ. ພຣະເຢຊູເບິ່ງທະລຸໄປເຖິງວາລະສຸດທ້າຍ ແລະ ຄົນລຸ້ນສຸດທ້າຍ; ພຣະອົງເຫັນຊາວໂລກຫຼົງໄປ ຕາມການຫຼອກລວງ ຄ້າຍຄືການຫຼອກລວງອັນເປັນເຫດໃຫ້ນະຄອນເຢຣູຊາເລັມຖືກທຳລາຍ. ຄວາມ ບາບອັນໜັກໜ່ວງຂອງຊາວຢິວ ແມ່ນການປະຕິເສດພຣະຄຣິສ, ໃນຂະນະທີ່ຄວາມບາບອັນຍິ່ງໃຫຍ່ ຂອງຄຣິສຕຽນໃນຍຸກສຸດທ້າຍ ແມ່ນການປະຕິເສດພຣະບັນຍັດຂອງພຣະເຈົ້າ ເຊິ່ງເປັນຮາກຖານ ການປົກຄອງຂອງພຣະອົງໃນຟ້າສະຫວັນ ແລະ ແຜ່ນດິນໂລກ. ຄົນທັງຫຼາຍຈະດູຖູກກົດເກນຂອງ ພຣະເຢໂຮວາ ແລະ ຈະບໍ່ເອົາໃຈໃສ່ຕໍ່ຫຼັກການຂອງພຣະອົງທັງໝົດ. ຄົນນັບລ້ານເປັນທາດຂອງ ຄວາມບາບ ແລະ ເປັນທາດຂອງຊາຕານ ຈະຕ້ອງພິນາດໄປຕະຫຼອດນິຣັນ ຄືຄວາມຕາຍຄັ້ງທີ

ສອງ, ແຕ່ໃນຂະນະດຽວກັນ ຄົນເຫຼົ່ານັ້ນກໍປິດຫູ ບໍ່ຍອມຟັງຖ້ອຍຄຳແຫ່ງຄວາມຈິງໃນມື້ທີ່ພຣະເຈົ້າຊົງຢ້ຽມຢາມພວກເຂົາ, ນັບວ່າເປັນການປິດຫູບັງຕາທີ່ເປັນຕາຢ້ານແທ້ ແລະ ເປັນຄວາມຫຼົງໄຫຼທີ່ແສນປະຫຼາດ. *{GC 22.2}*

ພຣະວິຫານ

ສອງວັນກ່ອນເທດສະການປັດສະຄາ ຫຼັງຈາກພຣະຄຣິສໄດ້ປະນາມຄວາມໜ້າຊື່ໃຈຄົດຂອງພວກຜູ້ນຳຊາວຢິວແລ້ວ, ພຣະອົງກໍສະເດັດອອກຈາກພຣະວິຫານເປັນເທື່ອສຸດທ້າຍ ແລະ ຂຶ້ນໄປຍັງພູເຂົາໝາກກອກເທດ ເພື່ອນັ່ງກັບເຫຼົ່າສາວົກທີ່ທົ່ງຫຍ້າ, ຈາກບ່ອນນັ້ນກໍສາມາດເບິ່ງລົງໄປເຫັນນະຄອນເຢຣູຊາເລັມ. ພຣະອົງໄດ້ແນມເຫັນກຳແພງເມືອງ, ຫໍຄອຍ ແລະ ພຣະຣາຊວັງອີກເທື່ອໜຶ່ງ ແລະ ກໍຫັນໄປເບິ່ງພຣະວິຫານອີກຄັ້ງໜຶ່ງ, ພຣະວິຫານນັ້ນສະທ້ອນແສງແວວວາວ ເປັນດັ່ງມົງກຸດງົດງາມຢູ່ເທິງພູສັກສິດ. *{GC 23.1}*

ໜຶ່ງພັນປີກ່ອນໜ້ານັ້ນ ຜູ້ປະພັນເພງສັນລະເສີນໄດ້ຍົກຍ້ອງພຣະຄຸນຂອງພຣະເຈົ້າ ທີ່ຊົງໂຜດໃຫ້ພຣະວິຫານໃນອິດສະຣາເອນເປັນທີ່ສະຖິດຂອງພຣະອົງ ໂດຍຂຽນໄວ້ວ່າ: “ພຣະອົງມີທີ່ປະທັບຢູ່ທີ່ນະຄອນເຢຣູຊາເລັມ ແລະ ມີທີ່ສະຖິດທີ່ເທິງພູຊີໂອນດ້ວຍ.” “ພຣະອົງຊໍ້າພັດເລືອກເອົາເຜົ່າຢູດາແທນທ້າພູເຂົາຊີໂອນ ເຊິ່ງພຣະອົງຮັກຫຼາຍທີ່ສຸດນັ້ນ. ໃນທີ່ນັ້ນ ພຣະອົງໄດ້ສ້າງພຣະວິຫານຂອງພຣະອົງ ເປັນດັ່ງບ່ອນຂອງພຣະອົງຢູ່ເທິງຟ້າສະຫວັນ.” (ເພງສັນລະເສີນ 76:2; 78:68, 69). ພຣະວິຫານຫຼັງທຳອິດ ຖືກສ້າງຂຶ້ນໃນສະໄໝທີ່ຊົນຊາດອິດສະຣາເອນມີຄວາມຈະເລີນຮຸ່ງເຮືອງທີ່ສຸດ, ກະສັດດາວິດໄດ້ຮວບຮວມຊັບສົມບັດຢ່າງຫຼວງຫຼາຍ ເພື່ອການສ້າງພຣະວິຫານ ແລະ ພຣະເຈົ້າຊົງນຳໃນການອອກແບບ.[2] ກະສັດໂຊໂລໂມນຜູ້ສະຫຼາດສະຫຼາດ ແລະ ມີປັນຍາຫຼາຍທີ່ສຸດໃນບັນດາກະສັດທັງຫຼາຍຂອງອິດສະຣາເອນ ເປັນຜູ້ເຮັດການກໍ່ສ້າງພຣະວິຫານໃຫ້ສຳເລັດ. ພຣະວິຫານຫຼັງນັ້ນເປັນອາຄານທີ່ງົດງາມທີ່ສຸດໃນປະຫວັດສາດ. ແຕ່ພຣະເຈົ້າຊົງກ່າວຜ່ານຜູ້ເຜີຍພຣະທຳຂອງພຣະອົງທີ່ຊື່ຮັກກາຍ ເຖິງພຣະວິຫານຫຼັງທີສອງນີ້ວ່າ: “ພຣະວິຫານຫຼັງໃໝ່ນີ້ຈະສະຫງ່າງາມກວ່າຫຼັງເກົ່າ.” “ເຮົາຈະເຮັດໃຫ້ບັນດາປະຊາຊາດສະທ້ານຫວັ່ນໄຫວ ເພື່ອຄວາມປາຖະໜາຂອງປະຊາຊາດທັງຫຼາຍຈະໄດ້ເຂົ້າມາ. ເຮົາຈະບັນຈຸວິຫານນີ້ໃຫ້ເຕັມດ້ວຍສະຫງ່າຣາສີ, ພຣະເຢໂຮວາຜູ້ຊົງຣິດອຳນາດຍິ່ງໃຫຍ່ຊົງກ່າວໄວ້ດັ່ງນີ້.” (ຮັກກາຍ 2:9, 7 ດັດແປງຈາກສະບັບ TKJV). *{GC 23.2}*

ຫຼັງຈາກກະສັດເນບູກາດເນັດຊາທຳລາຍພຣະວິຫານແລ້ວ ກໍມີການສ້າງພຣະວິຫານຫຼັງໃໝ່ຂຶ້ນມາປະມານ 500 ປີກ່ອນພຣະຄຣິສຊົງບັງເກີດ. ຜູ້ທີ່ກໍ່ສ້າງແມ່ນພວກທີ່ກັບມາຈາກການເປັນຊະເລີຍເສິກເປັນເວລາດົນນານ; ພວກເຂົາພົບເຫັນບ້ານເມືອງຖືກທຳລາຍໝົດ ແລະ ມີຜູ້ຄົນອາໄສພຽງໜ້ອຍດຽວ. ທ່າມກາງພວກຊະເລີຍເສິກທີ່ກັບມານັ້ນ ກໍມີຊາຍຊະລາບາງຄົນ ທີ່ເຄີຍເຫັນຄວາມສະຫງ່າງາມຂອງພຣະວິຫານ ທີ່ກະສັດໂຊໂລໂມນສ້າງ. ຄົນເຫຼົ່ານີ້ຮ້ອງໄຫ້ສຽງດັງ ເມື່ອເຫັນຮາກຖານຂອງອາຄານພຣະວິຫານຫຼັງໃໝ່ ເພາະເຫັນວ່າດ້ອຍກວ່າຫຼັງທຳອິດຫຼາຍ. ຜູ້ເຜີຍພຣະທຳໄດ້ບັນລະຍາຍເຖິງຄວາມຮູ້ສຶກຂອງຄົນເຫຼົ່ານັ້ນໃຫ້ເຫັນພາບວ່າ: “ໃນທ່າມກາງພວກເຈົ້າມີຜູ້ໃດແດ່ ທີ່ຍັງລະນຶກຄິດເຖິງຄວາມສະຫງ່າງາມຄັ້ງທຳອິດຂອງພຣະວິຫານໄດ້? ມາບັດນີ້ ພວກເຈົ້າເບິ່ງເຫັນເປັນຈັ່ງໃດ? ບໍ່ເຫັນມີຄຸນຄ່າຫຍັງເລີຍແມ່ນບໍ.” (ຮັກກາຍ 2:3; ເອຊະຣາ 3:12). ແລ້ວໃນຕອນນັ້ນ ພຣະເຈົ້າຊົງໃຫ້ຄຳສັນຍາວ່າ ຫຼັງໃໝ່ນີ້ຈະຍິ່ງໃຫຍ່ກວ່າຫຼັງທຳອິດ. *{GC 23.3}*

[2] ເບິ່ງ 1 ຂ່າວຄາວ 28:12, 19.

ແຕ່ພຣະວິຫານຫຼັງທີສອງບໍ່ໄດ້ສະຫງ່າງາມເທົ່າຫຼັງທຳອິດ ແລະ ກໍບໍ່ມີເຄື່ອງໝາຍປາກົດໃຫ້ເຫັນ ວ່າພຣະເຈົ້າສະຖິດຢູ່ ເໝືອນທີ່ເກີດຂຶ້ນໃນພຣະວິຫານຫຼັງທຳອິດ. ໃນພິທີເປີດ ກໍບໍ່ມີການສຳແດງ ຣິດອຳນາດຂອງພຣະເຈົ້າທີ່ເໜືອທຳມະຊາດ, ບໍ່ມີເມກແຫ່ງສະຫງ່າຣາສີລົງມາປົກຄຸມທົ່ວສະຖານ ນະມັດສະການທີ່ສ້າງຂຶ້ນມາໃໝ່ນັ້ນ, ບໍ່ມີໄຟຕົກລົງມາຈາກຟ້າສະຫວັນ ເພື່ອເຜົາເຄື່ອງບູຊາທີ່ວາງໄວ້ ເທິງແທ່ນບູຊາ. ໃນສະຖານທີ່ສັກສິດທີ່ສຸດ ກໍບໍ່ມີຣັດສະໝີຂອງພຣະເຈົ້າລະຫວ່າງເຄຣຸບ, ບໍ່ມີ ຫີບພັນທະສັນຍາ, ບໍ່ມີຝາອັດຫີບທີ່ເອີ້ນວ່າພຣະທີ່ນັ່ງແຫ່ງພຣະກະລຸນາ, ບໍ່ມີແຜ່ນສິລາທີ່ບັນທຶກ ພັນທະສັນຍາ ແລະ ບໍ່ມີພຣະສຸຣະສຽງຂອງພຣະເຈົ້າດັງກ້ອງລົງມາຈາກຟ້າສະຫວັນ ເພື່ອເປີດເຜີຍໃຫ້ ປະໂຣຫິດຮູ້ເຖິງນ້ຳພຣະໄທຂອງພຣະເຢໂຮວາ. {GC 24.1}

ຄົນຢິວພະຍາຍາມຢູ່ຫຼາຍຮ້ອຍປີເພື່ອອະທິບາຍວ່າ ພຣະສັນຍາຂອງພຣະເຈົ້າທີ່ຊົງກ່າວຜ່ານຜູ້ເຜີຍ-ພຣະທຳຮັກກາຍນັ້ນສຳເລັດແນວໃດ; ແຕ່ຄວາມຫຍິ່ງຜະຫຍອງເຮັດໃຫ້ພວກເຂົາຕາບອດ ແລະ ຍ້ອນວ່າ ບໍ່ມີຄວາມເຊື່ອ ພວກເຂົາຈຶ່ງບໍ່ສາມາດເຂົ້າໃຈເຖິງຄວາມໝາຍອັນແທ້ຈິງຂອງຜູ້ເຜີຍພຣະທຳ. ພຣະວິຫານ ຫຼັງທີສອງ ບໍ່ໄດ້ຮັບກຽດຈາກການປາກົດແຫ່ງແສງຣັດສະໝີຂອງພຣະເຢໂຮວາກໍຈິງ ແຕ່ໄດ້ຮັບກຽດເມື່ອ ອົງພຣະຜູ້ເປັນເຈົ້າໃນສະພາບມະນຸດສະເດັດເຂົ້າໄປໃນພຣະວິຫານນັ້ນ, ເພາະໃນພຣະເຢຊູຄຣິສ ສະພາບ ຂອງພຣະເຈົ້າດຳລົງຢູ່ໃນພຣະກາຍຢ່າງເຕັມບໍຣິບູນ. “ຄວາມປາຖະໜາຂອງປະຊາຊາດທັງຫຼາຍ” ໄດ້ ສະເດັດມາທີ່ພຣະວິຫານຂອງພຣະອົງຢ່າງແທ້ຈິງ ເມື່ອພຣະເຢຊູໄທນາຊາເຣັດສັ່ງສອນ ແລະ ຮັກສາ ພະຍາດຢູ່ໃນພຣະວິຫານນັ້ນ. ມີແຕ່ເລື່ອງການສະຖິດຢູ່ຂອງພຣະຄຣິສເລື່ອງດຽວ ທີ່ເຮັດໃຫ້ພຣະວິຫານ ຫຼັງທີສອງມີຄວາມຮຸ່ງເຮືອງກວ່າຫຼັງທຳອິດ. ແຕ່ຄົນອິດສະຣາເອນໄດ້ປະຕິເສດພຣະອົງຜູ້ທີ່ສະຫວັນໃຊ້ ມາເພື່ອໂຜດພວກເຂົາ. ເມື່ອພຣະອາຈານຜູ້ອ່ອນສຸພາບສະເດັດອອກຈາກປະຕູຄຳແຫ່ງພຣະວິຫານໃນມື້ ນັ້ນ ສະຫງ່າຣາສີໄດ້ພາກຈາກພຣະວິຫານໄປໂດຍບໍ່ມີວັນຫວນຄືນ. ຖ້ອຍຄຳຂອງພຣະຜູ້ໄຖ່ໄດ້ສຳເລັດ ແລ້ວ: “ພຣະວິຫານຂອງພວກເຈົ້າໄດ້ຖືກປະຖິ້ມໃຫ້ຮ້າງເປົ່າຢ່າງໝົດສິ້ນ.” (ມັດທາຍ 23:38). {GC 24.2}

ພວກສາວົກຢາກຮູ້

ພວກສາວົກຮູ້ສຶກປະຫຼາດໃຈ ກັບຄຳທຳນວາຍຂອງພຣະຄຣິສເລື່ອງພຣະວິຫານຈະຖືກທຳລາຍ ຈຶ່ງ ຢາກຮູ້ເພີ່ມເຕີມວ່າ ພຣະອົງໝາຍຄວາມວ່າແນວໃດ. ມີການທຸ້ມເທຊັບສິນ, ແຮງງານ ແລະ ຝີມື ດ້ານສະຖາປັດຕະຍະກຳຢ່າງຫຼວງຫຼາຍກວ່າ 40 ປີ ເພື່ອຕົບແຕ່ງຕຶກອາຄານຂອງພຣະວິຫານໃຫ້ງາມ ຂຶ້ນ. ກະສັດເຮໂຣດມະຫາຣາດໄດ້ມອບຊັບສິນຂອງໂຣມ ແລະ ສົມບັດຂອງຊາວຢິວຢ່າງລົ້ນເຫຼືອ ເພື່ອ ປະກອບສ່ວນໃນການກໍ່ສ້າງ; ແມ່ນແຕ່ຈັກກະພັດກໍໄດ້ສົ່ງຂອງປະທານມາ ເພື່ອເພີ່ມຄວາມຫຼູຫຼາໃຫ້ ແກ່ພຣະວິຫານນັ້ນ. ມີຫີນອ່ອນສີຂາວຂະໜາດໃຫຍ່ມະຫຶມາຖືກສົ່ງມາຈາກນະຄອນໂຣມ ເພື່ອການ ບູລະນະຕົບແຕ່ງ ແລະ ກາຍເປັນສ່ວນໜຶ່ງຂອງໂຄງສ້າງພຣະວິຫານ. ພວກສາວົກກໍຊີ້ໃຫ້ພຣະອາຈານ ເບິ່ງກ້ອນຫີນເຫຼົ່ານັ້ນ ໂດຍເວົ້າວ່າ: “ເບິ່ງແມ, ອາຈານເອີຍ! ຫີນຄືກ້ອນໃຫຍ່ແທ້! ອາຄານເຫຼົ່ານີ້ຊ່າງ ງົດງາມແທ້!” (ມາຣະໂກ 13:1 LCV). {GC 24.3}

ພຣະເຢຊູຊົງຕອບດ້ວຍຖ້ອຍຄຳທີ່ໜັກແໜ້ນ ແລະ ເປັນຕາໜ້າຕົກໃຈວ່າ: “ເຮົາບອກພວກເຈົ້າຕາມ ຄວາມຈິງວ່າ, ຫີນທຸກ ໆ ກ້ອນທີ່ຢອງທັບກັນຢູ່ນີ້ ຈະຖືກທຳລາຍລົງຈົນບໍ່ເຫຼືອຈັກກ້ອນ.” (ມັດທາຍ 24:2). {GC 25.1}

ພໍໄດ້ຍິນເຖິງການທຳລາຍຂອງນະຄອນເຢຣູຊາເລັມ ພວກສາວົກຄິດໄດ້ແຕ່ວ່າ ຕ້ອງແມ່ນການ ສະເດັດມາຂອງອົງພຣະຄຣິສ ເພື່ອຄອບຄອງອານາຈັກທັງຫຼາຍໃນໂລກ, ເພື່ອລົງໂທດຄົນຢິວທີ່ບໍ່ຍອມ ກັບໃຈ ແລະ ເພື່ອປົດແອກຂອງອານາຈັກໂຣມໃຫ້ຊົນຊາດອິດສະຣາເອນເປັນອິດສະຫຼະ. ພຣະເຢຊູ

ເຄີຍບອກພວກສາວົກວ່າ ພຣະອົງຈະສະເດັດມາເປັນເທື່ອທີສອງ; ສະນັ້ນ, ເມື່ອພຣະອົງກ່າວເຖິງ ການລົງໂທດນະຄອນເຢຣູຊາເລັມ ພວກເຂົາຈຶ່ງຄິດເຖິງການສະເດັດມາຄັ້ງທີສອງຂອງພຣະອົງ. ໃນ ຂະນະທີ່ຍັງນັ່ງຢູ່ກັບພຣະອົງເທິງພູເຂົາໝາກກອກເທດ ພວກເຂົາຈຶ່ງຖາມວ່າ: “ຈົ່ງບອກພວກຂ້ານ້ອຍ ແດ່ວ່າ ເຫດການທັງໝົດນັ້ນຈະເກີດຂຶ້ນເມື່ອໃດ? ແລະມີສິ່ງໃດເປັນໝາຍສຳຄັນ ເພື່ອຊີ້ໃຫ້ເຫັນວ່າ ແມ່ນ ເວລາມາປາກົດຂອງທ່ານ ແລະ ເວລາສິ້ນສຸດຂອງໂລກ?” (ມັດທາຍ 24:3). *{GC 25.2}*

ພຣະເຢຊູຊົງເມດຕາພວກສາວົກ ຈຶ່ງປິດບັງອະນາຄົດໄວ້ຈາກພວກເຂົາ. ຖ້າຫາກວ່າໃນເວລາ ນັ້ນ ພວກເຂົາໄດ້ຮັບຮູ້ເລື່ອງທີ່ຮ້າຍແຮງສອງເລື່ອງ ຄືການສິ້ນພຣະຊົນຢ່າງທຸກທໍລະມານຂອງພຣະຜູ້ໄຖ່ ແລະ ການທຳລາຍນະຄອນກັບພຣະວິຫານຂອງພວກເຂົາ ສາວົກຄົງຈະຕົກໃຈຢ້ານຈົນເຮັດຫຍັງ ບໍ່ໄດ້. ພຣະຄຣິສຈຶ່ງອະທິບາຍຫຍໍ້ໆ ເຖິງເຫດການຕ່າງໆທີ່ຈະເກີດຂຶ້ນກ່ອນການສິ້ນໂລກ. ໃນ ຂະນະນັ້ນ ພວກສາວົກບໍ່ໄດ້ເຂົ້າໃຈຄວາມໝາຍທັງໝົດ, ແຕ່ເມື່ອຄົນຂອງພຣະເຈົ້າຕ້ອງການຄວາມ ກະຈ່າງແຈ້ງເພີ່ມເຕີມ ພຣະອົງຈະຊ່ວຍໃຫ້ພວກເຂົາເຂົ້າໃຈຄຳສອນດັ່ງກ່າວໃຫ້ຫຼາຍຂຶ້ນ. ຄຳທຳນວາຍ ຂອງພຣະອົງມີສອງຄວາມໝາຍຄື: ຄວາມໝາຍທີໜຶ່ງ ແມ່ນກ່າວເຖິງການທຳລາຍນະຄອນເຢຣູຊາເລັມ, ສ່ວນຄວາມໝາຍທີສອງ ກ່າວເຖິງເຫດການອັນເປັນຕາຢ້ານແຫ່ງວັນສິ້ນໂລກ. *{GC 25.3}*

ພຣະເຢຊູຊົງກ່າວໃຫ້ພວກສາວົກທີ່ນັ່ງຟັງ ເຖິງການລົງໂທດຊົນຊາດອິດສະຣາເອນທີ່ຫຼົງໄປຈາກ ພຣະເຈົ້າ ໂດຍສະເພາະແມ່ນໂທດທີ່ຈະຕ້ອງຮັບຍ້ອນການປະຕິເສດພຣະຄຣິສຜູ້ທີ່ພຣະເຈົ້າຊົງໃຊ້ ມາ ເພື່ອຊົງໂຜດພວກເຂົາ ແລະ ໂທດຂອງພວກເຂົາທີ່ຄຶງພຣະອົງໄວ້ເທິງໄມ້ກາງແຂນ. ຈະມີ ໝາຍສຳຄັນແຈ່ມແຈ້ງແນ່ນອນ ບົ່ງບອກເຖິງການທຳລາຍນະຄອນ; ເວລາທີ່ໜ້າຢ້ານຫຼາຍນັ້ນຈະມາ ເຖິງຢ່າງກະທັນຫັນ. ພຣະຜູ້ໂຜດໃຫ້ພົ້ນຈຶ່ງເຕືອນຜູ້ຕິດຕາມພຣະອົງວ່າ: “ພວກເຈົ້າຈະເຫັນ ‘ສິ່ງ ປະຫຼາດອັນໜ້າຢ້ານ’ ທີ່ເຮັດໃຫ້ເກີດວິບັດ ຕັ້ງຢູ່ໃນພຣະວິຫານອັນສັກສິດຂອງພຣະເຈົ້າ ຕາມທີ່ ຜູ້ທຳນວາຍດານີເອນໄດ້ກ່າວໄວ້. (ໃຫ້ຜູ້ອ່ານເຂົ້າໃຈເອງ). ເມື່ອນັ້ນ ຜູ້ທີ່ຢູ່ໃນແຂວງຢູດາຍໃຫ້ປົບໜີໄປສູ່ ພູເຂົາທັງຫຼາຍ.” (ມັດທາຍ 24:15, 16; ລູກາ 21:20, 21). ເມື່ອທຸງຂອງໂຣມ ອັນເປັນສັນຍະລັກ ຂອງການຂາບໄຫວ້ຮູບເຄົາລົບ ຖືກປັກໄວ້ໃນອານາເຂດສັກສິດ ເຊິ່ງຮວມທີ່ດິນຢູ່ນອກກຳແພງເມືອງຫຼາຍ ຮ້ອຍແມັດ, ນັ້ນເປັນໝາຍສຳຄັນ ໃຫ້ຜູ້ຕິດຕາມພຣະຄຣິສປົບໜີເພື່ອຄວາມປອດໄພ. ເມື່ອພວກເຂົາເຫັນ ໝາຍສຳຄັນທີ່ເຕືອນໄພນັ້ນ ກໍຕ້ອງຟ້າວໜີໂດຍບໍ່ຕ້ອງລໍຊ້າ. ເມື່ອສັນຍານທີ່ໃຫ້ໜີນັ້ນປາກົດແລ້ວ ຄົນ ທີ່ຢູ່ທົ່ວແຂວງຢູດາຍ ແລະ ຜູ້ທີ່ຢູ່ພາຍໃນນະຄອນເຢຣູຊາເລັມເອງ ຕ້ອງເຊື່ອຟັງ ແລະ ປະຕິບັດ ຕາມທັນທີ. ຜູ້ທີ່ບັງເອີນຢູ່ເທິງລະບຽງຫຼັງຄາໃນເວລານັ້ນ ຈະຕ້ອງບໍ່ເຂົ້າບ້ານ ເພື່ອໄປເອົາຂອງມີຄ່າ ທີ່ຕົນຫວງແຫນທີ່ສຸດ. ຜູ້ທີ່ຢູ່ຕາມໄຮ່ນາ ບໍ່ຕ້ອງເມືອເອົາເສື້ອກັນໜາວທີ່ປະວາງໄວ້ເມື່ອເຮັດວຽກຍາມ ແດດຮ້ອນ; ພວກເຂົາຈະຕ້ອງໜີ ໂດຍບໍ່ລັງເລແມ່ນແຕ່ໜ້ອຍ ເພື່ອຈະບໍ່ຖືກທຳລາຍພ້ອມກັບຄົນ ອື່ນໆ. *{GC 25.4}*

ທຳນວາຍໄວ້ວ່າເຢຣູຊາເລັມຈະຫຼົ້ມຈົມ

ໃນຊ່ວງເວລາທີ່ກະສັດເຮໂຣດປົກຄອງຢູ່ນັ້ນ, ນະຄອນເຢຣູຊາເລັມໄດ້ຮັບການເສີມແຕ່ງໃຫ້ສວຍສົດ ງົດງາມຫຼາຍຂຶ້ນກວ່າເກົ່າ ແລະ ໄດ້ມີການກໍ່ສ້າງຫໍຄອຍກັບປ້ອມຍາມ, ມີການຕໍ່ເຕີມກຳແພງເມືອງ ໃຫ້ເຂັ້ມແຂງຂຶ້ນ. ໂດຍທຳມະຊາດແລ້ວ ສະຖານທີ່ທີ່ຕັ້ງຂອງນະຄອນເຢຣູຊາເລັມປ້ອງກັນໄດ້ງ່າຍ, ແຕ່ ເນື່ອງຈາກການກໍ່ສ້າງເສີມແຕ່ງຂອງກະສັດເຮໂຣດ ທຸກຄົນຖືວ່ານະຄອນນີ້ໝຸງວແໜ້ນ ບໍ່ສາມາດຕີໃຫ້ ແຕກໄດ້. ໃນເວລານັ້ນ ຖ້າຜູ້ໃດປະກາດໃນທີ່ສາທາລະນະວ່າ ນະຄອນເຢຣູຊາເລັມຈະຖືກທຳລາຍ ຄົນ ທັງຫຼາຍຈະຫາວ່າເປັນຄົນບ້າເສຍສະຕິ ແລະ ຕື່ນຂ່າວລື ເໝືອນຄົນໃນສະໄໝນ້ຳຖ້ວມໂລກຫົວຂວັນ

ໂນອາ. ພຣະຄຣິສຊົງກ່າວວ່າ: “ຟ້າ ແລະ ດິນກໍຈະລ່ວງພົ້ນໄປ, ແຕ່ຖ້ອຍຄຳຂອງເຮົາຈະບໍ່ລ່ວງພົ້ນໄປ ຈັກເທື່ອ.” (ມັດທາຍ 24:35). ພຣະເຈົ້າຊົງຕັດສິນລົງໂທດນະຄອນນີ້ ເພາະຄວາມຜິດບາບຂອງຄົນທີ່ ອາໄສຢູ່ໃນນັ້ນ; ສ່ວນການທີ່ພວກເຂົາດື້ດ້ານບໍ່ຍອມເຊື່ອ ເປັນເຫດໃຫ້ການລົງໂທດນັ້ນຕ້ອງເກີດຂຶ້ນຢ່າງ ແນ່ນອນ. *{GC 26.1}*

ພຣະເຈົ້າຊົງກ່າວຜ່ານຜູ້ເຜີຍພຣະທຳມີກາວ່າ: “ຈົ່ງຟັງຂ້າພະເຈົ້າເທີ້ນ ບັນດາຜູ້ນຳຊາດອິດສະ-ຣາເອນເອີຍ ພວກເຈົ້າທີ່ກຽດຊັງຄວາມຍຸຕິທຳ ແລະ ປ່ຽນຖືກໃຫ້ເປັນຜິດ. ພວກເຈົ້າກຳລັງສ້າງນະຄອນ ເຢຣູຊາເລັມ ນະຄອນຂອງພຣະເຈົ້າ ຢູ່ເທິງພື້ນຖານແຫ່ງຄາຕະກຳ ແລະ ຄວາມອະຍຸຕິທຳ. ພວກ ຜູ້ປົກຄອງເມືອງ ກໍປົກຄອງດ້ວຍເຫັນແກ່ສິນບົນ, ພວກປະໂຣຫິດ ກໍແປກົດບັນຍັດດ້ວຍເຫັນແກ່ຄ່າຈ້າງ ລາງວັນ, ພວກຜູ້ທຳນວາຍ ກໍບອກນິມິດຂອງຕົນດ້ວຍເຫັນແກ່ເງິນ ແລະ ພວກເຂົາທຸກຄົນຕ່າງກໍ ອ້າງວ່າ ອົງພຣະຜູ້ເປັນເຈົ້າຢູ່ກັບພວກຕົນ ພວກເຂົາເວົ້າວ່າ, ‘ເຫດຮ້າຍໃດ ໆ ຈະບໍ່ມາຖືກພວກເຮົາ ດອກ ເພາະອົງພຣະຜູ້ເປັນເຈົ້າສະຖິດຢູ່ນຳພວກເຮົາ.’” (ມີກາ 3:9–11 LO2012). *{GC 26.2}*

ຖ້ອຍຄຳເຫຼົ່ານີ້ ບັນລະຍາຍເຖິງລັກສະນະຂອງຊາວນະຄອນເຢຣູຊາເລັມທີ່ເປັນຄົນສໍ້ໂກງ ໃນ ຂະນະທີ່ຫຼົງຕົວເອງວ່າເປັນຄົນຊອບທຳ. ພວກເຂົາອ້າງວ່າ ຕົນໄດ້ປະຕິບັດຕໍ່ກົດບັນຍັດຂອງພຣະເຈົ້າ ຢ່າງເຄັ່ງຄັດ ໃນຂະນະທີ່ກຳລັງເຮັດຜິດຕໍ່ຫຼັກການທຸກຂໍ້ຂອງກົດບັນຍັດເຫຼົ່ານັ້ນ. ພວກເຂົາກຽດຊັງ ພຣະຄຣິສ ເພາະວ່າຄວາມບໍຣິສຸດຂອງພຣະອົງເປີດເຜີຍຄວາມຜິດບາບຂອງຕົນ. ຄົນເຫຼົ່ານັ້ນກ່າວຫາ ວ່າ ພຣະອົງເປັນຕົ້ນເຫດທີ່ພວກເຂົາຕ້ອງຮັບຄວາມລຳບາກ ອັນເປັນຜົນຂອງຄວາມບາບຂອງພວກ ເຂົາເອງ. ເຖິງແມ່ນພວກເຂົາຮູ້ວ່າພຣະອົງບໍ່ມີບາບ ແຕ່ກໍປະກາດວ່າ ພຣະອົງຕ້ອງຕາຍ ເພື່ອ ຄວາມຢູ່ລອດຂອງບ້ານເມືອງ. ເຫຼົ່າຜູ້ນຳຊາວຢິວກ່າວວ່າ: “ຖ້າພວກເຮົາປ່ອຍໃຫ້ລາວເຮັດຢູ່ຢ່າງນີ້ ແລ້ວ ຄົນທັງຫຼາຍກໍຈະເຊື່ອລາວ ແລະ ພວກໂຣມກໍຈະມາທຳລາຍພຣະວິຫານກັບປະເທດຊາດ ຂອງພວກເຮົາ.” (ໂຢຮັນ 11:48). ຖ້າຍອມໃຫ້ພຣະຄຣິສຖືກຂ້າແລ້ວ ພວກເຂົາກໍອາດຈະຮວມຕົວ ກັນເປັນຊາດທີ່ໝັ້ນຄົງແຂງແກ່ນ. ພວກເຂົາໃຫ້ເຫດຜົນຢ່າງນີ້ແຫຼະ ຈຶ່ງຕົກລົງຕາມຄຳຕັດສິນຂອງ ມະຫາປະໂຣຫິດຂອງພວກຕົນວ່າ ຈະເປັນການດີກວ່າ ຖ້າໃຫ້ຜູ້ໜຶ່ງຕາຍ ແທນທີ່ຄົນທັງຊາດຕ້ອງ ພິນາດ. *{GC 27.1}*

ດັ່ງນີ້ແຫຼະ ຜູ້ນຳຊາວຢິວຈຶ່ງ “ສ້າງນະຄອນເຢຣູຊາເລັມນະຄອນຂອງພຣະເຈົ້າ ຢູ່ເທິງພື້ນຖານແຫ່ງ ຄາຕະກຳ ແລະ ຄວາມອະຍຸຕິທຳ.” (ມີກາ 3:10). ໃນຂະນະທີ່ພວກເຂົາຂ້າພຣະຜູ້ຊ່ວຍໃຫ້ລອດຂອງ ຕົນເອງ ເພາະພຣະອົງຊົງຕັກເຕືອນພວກເຂົາໃນເລື່ອງຄວາມບາບ, ຄົນເຫຼົ່ານັ້ນກັບຫຼົງຕົວເອງວ່າເປັນ ຄົນຊອບທຳ ແລະ ເປັນຊົນຊາດທີ່ພຣະເຈົ້າຊົງກະລຸນາ ຈຶ່ງຄາດຫວັງໃຫ້ພຣະເຈົ້າຊ່ວຍກູ້ພວກເຂົາຈາກ ອຳນາດຂອງສັດຕູ. ຜູ້ເຜີຍພຣະທຳຈຶ່ງກ່າວຕໍ່ໄປອີກວ່າ: “ເພາະສະນັ້ນ ຍ້ອນພວກເຈົ້າ ພູເຂົາຊີໂອນຈະ ຖືກໄຖເໝືອນໄຖນາ ນະຄອນເຢຣູຊາເລັມຈະກາຍເປັນກອງສິ່ງຮົກຮ້າງເພພັງ ແລະ ເນີນພູບ່ອນທີ່ຕັ້ງ ພຣະວິຫານກໍຈະກາຍເປັນປ່າ.” (ມີກາ 3:12). *{GC 27.2}*

ພຣະເຈົ້າຊົງຖ່ວງເວລາການລົງໂທດນະຄອນເຢຣູຊາເລັມເກືອບ 40 ປີ ຫຼັງຈາກພຣະຄຣິສປະກາດ ວ່ານະຄອນເຢຣູຊາເລັມຈະຕ້ອງຖືກທຳລາຍ. ພຣະເຈົ້າຊົງກະລຸນາອົດກັ້ນຕໍ່ຄົນທີ່ປະຕິເສດບໍ່ຮັບຂ່າວ ປະເສີດ ແລະ ຕໍ່ຄົນເຫຼົ່ານັ້ນທີ່ໄດ້ຂ້າພຣະບຸດຂອງພຣະອົງ. ຄຳອຸປະມາເລື່ອງຕົ້ນໝາກເດື່ອເທດທີ່ບໍ່ ເກີດຜົນ ປຽບເໝືອນກັບການປະຕິບັດຂອງພຣະເຈົ້າຕໍ່ຊົນຊາດຢິວ. ມີການປະກາດສັ່ງວ່າ, “ຈົ່ງປ້ຳ ມັນຖິ້ມເສຍ ຈະເອົາໄວ້ໃຫ້ຮົກດິນລ້າ ໆ ເຮັດຫຍັງ?” (ລູກາ 13:7). ແຕ່ດ້ວຍພຣະເມດຕາກະລຸນາ ຂອງພຣະເຈົ້າ ຕົ້ນນັ້ນບໍ່ຖືກຕັດຖິ້ມໃນທັນທີທັນໃດ. ເຊັ່ນດຽວກັນ, ຍັງມີຄົນຢິວຫຼາຍຄົນທີ່ບໍ່ຮູ້ຈັກ ອຸປະນິໄສ ແລະ ພາລະກິດຂອງພຣະຄຣິສ, ໃນຂະນະດຽວກັນນັ້ນ ລູກຫຼານຍັງບໍ່ມີໂອກາດຮັບຮູ້

ເຖິງແສງສະຫວ່າງທີ່ພໍ່ແມ່ປະຕິເສດ. ພຣະເຈົ້າຊົງປາຖະໜາທີ່ຈະສ່ອງສະຫວ່າງໃຫ້ຄົນຍິວຜ່ານການເທດສະໜາຂອງພວກອັກຄະສາວົກ ແລະ ຜູ້ທີ່ຮ່ວມມືກັບພວກເຂົາ ເພື່ອໃຫ້ຄົນຍິວເຂົ້າໃຈວ່າ ຄຳຂອງພວກຜູ້ເຜີຍພຣະທຳໄດ້ສຳເລັດລົງແນວໃດ ບໍ່ພຽງແຕ່ໃນການບັງເກີດ ແລະ ໃນຊີວິດຂອງພຣະຄຣິສເທົ່ານັ້ນ ແຕ່ໃນການສິ້ນພຣະຊົນ ແລະ ການຟື້ນຄືນພຣະຊົນຊີບອີກດ້ວຍ. ພຣະເຈົ້າບໍ່ໄດ້ກ່າວໂທດລູກຍ້ອນຄວາມຜິດບາບຂອງພໍ່ແມ່, ແຕ່ເມື່ອລູກຮັບຮູ້ເຖິງແສງສະຫວ່າງທີ່ພໍ່ແມ່ເຄີຍໄດ້ຮັບ ແລະ ຍັງປະຕິເສດແສງສະຫວ່າງເພີ່ມເຕີມທີ່ພຣະເຈົ້າກະລຸນາສ່ອງມາຍັງຕົນ ກໍເທົ່າກັບວ່າສົມຮູ້ຮ່ວມຄິດໃນບາບຂອງພໍ່ແມ່, ຄວາມຜິດບາບຂອງຕົນກໍຖືວ່າເຕັມອັດຕາ. *{GC 27.3}*

ຖືກລ້ອມແລ້ວກ່ອນຖືກທຳລາຍ

ແຕ່ການອົດທົນຢ່າງດົນນານຂອງພຣະເຈົ້າຕໍ່ຊາວນະຄອນເຢຣູຊາເລັມ ມີແຕ່ເຮັດໃຫ້ພວກເຂົາດື້ດ້ານ ບໍ່ຍອມກັບໃຈຫຼາຍຂຶ້ນກວ່າເກົ່າ. ພວກເຂົາກຸ້ງດຊັງພວກສາວົກຂອງພຣະເຢຊູ ແລະ ປະຕິບັດຕໍ່ຜູ້ຕິດຕາມພຣະຄຣິສຢ່າງໂຫດຮ້າຍທາລຸນ ເຊິ່ງເປັນການປະຕິເສດຄວາມເມດຕາເທື່ອສຸດທ້າຍ. ເວລານັ້ນ ພຣະເຈົ້າຈຶ່ງຖອນການປົກປ້ອງຄຸ້ມຄອງອອກຈາກພວກເຂົາ ແລະ ຍົກເລີກການຢັບຢັ້ງອຳນາດຂອງຊາຕານກັບພວກທູດຂອງມັນ. ແລ້ວຊົນຊາດອິດສະຣາເອນ ຈຶ່ງຕົກຢູ່ໃນມືຂອງຜູ້ນຳທີ່ພວກເຂົາໄດ້ເລືອກເອງ. ຊາວເມືອງໄດ້ດູຖູກພຣະຄຸນຂອງພຣະຄຣິສ ທີ່ສາມາດຊ່ວຍພວກເຂົາໃນການຄວບຄຸມຄວາມຄິດຊົ່ວ, ຄວາມຄິດຊົ່ວຈຶ່ງຄວບຄຸມພວກເຂົາແທນ. ຊາຕານຍົວະຄົນທັງຫຼາຍໃຫ້ເກີດອາລົມຕ່ຳຊ້າ ແລະ ປ່າເຖື່ອນ ຈົນກາຍເປັນຄົນທີ່ບໍ່ມີເຫດຜົນ, ພວກເຂົາໃຈຮ້າຍເປັນຟືນເປັນໄຟ ຈົນຕາບອດ ແລະ ໃຊ້ເຫດຜົນບໍ່ໄດ້. ພວກເຂົາໂຫດຫ້ຽມທາລຸນເໝືອນຊາຕານ; ບໍ່ວ່າຢູ່ໃນຄອບຄົວ ຫຼື ໃນສັງຄົມທົ່ວໄປ ຄົນຊົນຊັ້ນສູງ ຫຼື ຊັ້ນຕ່ຳກໍເກີດຄວາມຫວາດລະແວງ, ຄວາມອິດສາ, ຄວາມກຸ້ງດຊັງ, ການຜິດຖຽງກັນ, ການຫັກຫຼັງກັນ ແລະ ການຂ້າກັນທົ່ວໜ້າ. ບໍ່ມີບ່ອນໃດປອດໄພ, ຍາດຕິພີ່ນ້ອງ ແລະ ໝູ່ເພື່ອນກໍຫັກຫຼັງກັນ; ມີພໍ່ແມ່ຂ້າລູກ ແລະ ລູກຂ້າພໍ່ແມ່. ບັນດາຜູ້ປົກຄອງປະຊາຊົນບໍ່ສາມາດປົກຄອງໃຈຕົນເອງໄດ້, ເມື່ອຄວບຄຸມອາລົມບໍ່ໄດ້ ກໍກາຍເປັນຄົນທີ່ໃຊ້ອຳນາດຢ່າງປ່າເຖື່ອນ. ຄົນຍິວຍອມຟັງພະຍານເທັດ ເພື່ອກ່າວໂທດພຣະບຸດຂອງພຣະເຈົ້າຜູ້ບໍ່ມີຄວາມຜິດ; ບັດນີ້, ການເປັນພະຍານເທັດໃສ່ຮ້າຍກັນ ເຮັດໃຫ້ຊີວິດຂອງພວກເຂົາເອງບໍ່ແນ່ນອນ. ເປັນເວລາອັນດົນນານ ທີ່ການກະທຳຂອງຊາວເມືອງເປັນໄປຕາມຖ້ອຍຄຳທີ່ກ່າວວ່າ: “ພວກເຮົາບໍ່ຢາກຟັງເຖິງເລື່ອງພຣະເຈົ້າອົງບໍຣິສຸດຂອງຊາດອິດສະຣາເອນ.” (ເອຊາຢາ 30:11). ບັດນີ້, ຄວາມປາຖະໜາຂອງພວກເຂົາໄດ້ຮັບການຕອບສະໜອງ. ຄວາມຢຳເກງພຣະເຈົ້າບໍ່ໄດ້ລົບກວນຈິດໃຈຂອງພວກເຂົາອີກແລ້ວ, ຊາຕານເປັນຜູ້ນຳຊາດ ແລະ ເຈົ້າໜ້າທີ່ສູງສຸດຝ່າຍການປົກຄອງ ແລະ ຝ່າຍສາສະໜາກໍຢູ່ໃຕ້ອຳນາດຂອງມັນ. *{GC 28.1}*

ມີການແບ່ງແຍກພັກພວກໃນສັງຄົມ. ບາງຄັ້ງຫົວໜ້າກຸ່ມຈັບມືກັບຝ່າຍກົງກັນຂ້າມເພື່ອປຸ້ນ ແລະ ທຳລະມານເຫຍື່ອຜູ້ເຄາະຮ້າຍ ແລ້ວກໍຫັນກັບມາຍົກກຳລັງຕໍ່ສູ້ກັນ ແລະ ຂ້າຟັນກັນຢ່າງບໍ່ຮູ້ປານີ; ແມ່ນແຕ່ສະຖານທີ່ສັກສິດຂອງພຣະວິຫານ ກໍບໍ່ສາມາດຢຸດຢັ້ງຄວາມໂຫດຮ້າຍຂອງພວກເຂົາລົງໄດ້. ມີການຂ້າຟັນຜູ້ມາຮ່ວມນະມັດສະການຕໍ່ໜ້າແທ່ນບູຊາເລີຍ, ພຣະວິຫານຈຶ່ງເປັນມົນທິນດ້ວຍຊາກສົບຂອງຜູ້ທີ່ຖືກຂ້າຕາຍ. ຄົນທັງຫຼາຍທີ່ຢູ່ເບື້ອງຫຼັງພາລະກິດຈາກແດນນະຣົກນີ້ຕາບອດ ແຖມຍັງຫຼົງຕົວເອງຢ່າງໝົ້ນປະໝາດ. ພວກເຂົາປະກາດວ່າ ຕົນບໍ່ຢ້ານວ່ານະຄອນເຢຣູຊາເລັມຈະຖືກທຳລາຍ ເພາະວ່າເປັນນະຄອນຂອງອົງພຣະຜູ້ເປັນເຈົ້າເອງ. ແລ້ວເພື່ອຈະຮວບຮວມອຳນາດໄວ້, ພວກເຂົາໃຫ້ສິນບົນແກ່ຜູ້ເຜີຍພຣະທຳເທັດ ໃຫ້ປະກາດແກ່ປະຊາຊົນວ່າ ‘ຈົ່ງລໍຖ້າການຊ່ວຍກູ້ຈາກພຣະເຈົ້າ’ ແມ່ນວ່າໃນ

ຂະນະນັ້ນ ກອງທັບໂຣມໄດ້ລ້ອມພຣະວິຫານໄວ້ແລ້ວກໍຕາມ. ປະຊາຊົນຈຳນວນຫຼວງຫຼາຍຫຼົງເຊື່ອຈົນເຖິງທີ່ສຸດວ່າ ພຣະເຈົ້າຜູ້ຊົງຣິດອຳນາດສູງສຸດ ຈະເຂົ້າແຊກສະຖານະການເພື່ອປາບປາມພວກສັດຕູໃຫ້ປະລາໄຊ. ແຕ່ຄົນອິດສະຣາເອນໄດ້ໝິ່ນປະໝາດການປົກປ້ອງຂອງພຣະເຈົ້າແລ້ວ ຈຶ່ງບໍ່ມີແນວປ້ອງກັນ, ໂອ ນະຄອນເຢຣູຊາເລັມເອີຍ ເຈົ້າເປັນທຸກແທ້ໜໍ! ເຈົ້າແຕກແຍກກັນພາຍໃນ. ຖະໜົນຫົນທາງຂອງເຈົ້າສີແດງກ່ຳ ຍ້ອນເລືອດຂອງລູກຫຼານທີ່ຂ້າກັນເອງ ໃນຂະນະທີ່ກອງທັບຄົນຕ່າງຊາດຕີຫໍຄອຍໃຫ້ພັງລົງ ແລະ ຂ້າທະຫານຂອງເຈົ້າໃຫ້ຕາຍ! {GC 29.1}

ຄຳທຳນວາຍຂອງພຣະຄຣິສ ກ່ຽວກັບການທຳລາຍນະຄອນເຢຣູຊາເລັມ ສຳເລັດລົງຕາມທີ່ຊົງກ່າວໄວ້ທຸກປະການ. ຄົນຍິວໄດ້ປະສົບຄວາມຈິງຂອງຖ້ອຍຄຳທີ່ພຣະອົງຊົງກ່າວ ເພື່ອຕັກເຕືອນພວກເຂົາວ່າ: “ເຈົ້າຈະຕວງໃຫ້ເຂົາດ້ວຍເຄື່ອງຜອງອັນໃດ ພຣະເຈົ້າກໍຈະຕວງໃຫ້ເຈົ້າດ້ວຍເຄື່ອງຜອງອັນນັ້ນ.” (ມັດທາຍ 7:2). {GC 29.2}

ມີໝາຍສຳຄັນ ແລະ ປາກົດການແປກປະຫຼາດເກີດຂຶ້ນ ເປັນລາງບອກເຖິງຄວາມຈິບຫາຍທີ່ຈວນຈະເຂົ້າມາ. ໃນກາງຄືນມີແສງເໜືອທຳມະຊາດ ສ່ອງມາເໜືອພຣະວິຫານ ແລະ ແທ່ນບູຊາ, ມີພາບລົດມ້າ ແລະ ທະຫານກຸ່ມເຂົ້າສົ່ງຄາມປາກົດຢູ່ໃນເມກຍາມຕາເວັນຕົກດິນ. ພວກປະໂຣຫິດທີ່ເຮັດໜ້າທີ່ໃນພຣະວິຫານຍາມກາງຄືນ ກໍຕົກໃຈຢ້ານເມື່ອໄດ້ຍິນສຽງແປກປະຫຼາດ. ເກີດແຜ່ນດິນໄຫວ ແລະ ມີສຽງຄົນຈຳນວນຫຼວງຫຼາຍຮ້ອງຂຶ້ນວ່າ: “ໃຫ້ເຮົາອອກໄປຈາກທີ່ນີ້ກັນເທາະ.” ປະຕູໃຫຍ່ດ້ານຕາເວັນອອກໜັກຫຼາຍ ຈົນຜູ້ຊາຍຊາວຄົນຕ້ອງໃຊ້ກຳລັງຫຼາຍກວ່າຈະປິດໄດ້, ມີເຫຼັກແທ່ງໜາໃຫຍ່ສຸບເລີກລົງໄປໃນພື້ນຫີນເປັນໄລກອນ, ແຕ່ປະຕູນີ້ຖືກເປີດອອກໃນຍາມທ່ຽງຄືນເອງ ໂດຍບໍ່ເຫັນວ່າມີຜູ້ໃດເຮັດ.[3] {GC 29.3}

ຕະຫຼອດເວລາເຈັດປີ ມີຊາຍຄົນໜຶ່ງຍ່າງຂຶ້ນຍ່າງລົງຕາມຖະໜົນຫົນທາງໃນນະຄອນເຢຣູຊາເລັມ ແລ້ວປະກາດເຖິງວິບັດທີ່ຈະເກີດຂຶ້ນກັບນະຄອນນັ້ນ. ລາວຂັບຮ້ອງບົດໄວ້ທຸກທັງເວັນທັງຄືນວ່າ: “ມີສຽງດັງມາຈາກຕາເວັນອອກ! ເກີດສຽງກ້ອງຈາກຕາເວັນຕົກ! ມີສຽງສະທ້ອນມາຈາກລົມທັງສີ່! ເປັນສຽງຕໍ່ສູ້ນະຄອນເຢຣູຊາເລັມ ແລະ ຕໍ່ສູ້ພຣະວິຫານ! ເປັນສຽງຕໍ່ຕ້ານບັນດາເຈົ້າບ່າວ ແລະ ເຈົ້າສາວ! ເປັນສຽງຕໍ່ສູ້ປະຊາຊົນທັງປວງ!”[4] ຄົນປະຫຼາດນີ້ຖືກຕີ ແລະ ຖືກຂັງຄຸກ ແຕ່ກໍບໍ່ມີຄຳຈົ່ມຄຳວ່າອອກຈາກປາກຂອງລາວເລີຍ. ເມື່ອຖືກປ້ອຍດ່າ ຫຼື ຂົ່ມເຫັງ ລາວໄດ້ແຕ່ຕອບວ່າ: “ຈະເກີດວິບັດແລ້ວ! ວິບັດແກ່ນະຄອນເຢຣູຊາເລັມ! ແລະ ວິບັດແກ່ປະຊາຊົນທີ່ອາໄສຢູ່ໃນເມືອງ!” ລາວບໍ່ຢຸດຮ້ອງຕັກເຕືອນ ຈົນລາວຖືກຂ້າຕາຍໃນການປິດລ້ອມເມືອງທີ່ຕົນໄດ້ທຳນວາຍໄວ້. {GC 30.1}

ບໍ່ມີຄຣິສຕຽນເສຍຊີວິດເມື່ອນະຄອນເຢຣູຊາເລັມຖືກທຳລາຍແມ່ນແຕ່ຄົນດຽວ. ພຣະຄຣິສໄດ້ເຕືອນສາວົກຂອງພຣະອົງ ແລະ ທຸກຄົນທີ່ເຊື່ອຄຳຂອງພຣະອົງກໍເຝົ້າລໍຖ້າໝາຍສຳຄັນທີ່ພຣະອົງສັນຍາໄວ້. ພຣະເຢຊູຊົງກ່າວວ່າ: “ເມື່ອໃດເຈົ້າທັງຫຼາຍເຫັນກອງທັບຕ່າງ ໆ ມາຕັ້ງອ້ອມນະຄອນເຢຣູຊາເລັມ, ເມື່ອນັ້ນແຫຼະ ພວກເຈົ້າຈະຮູ້ວ່າ ເມືອງຈະຖືກທຳລາຍໃນໄວ ໆ. ເມື່ອນັ້ນ ໃຫ້ຜູ້ທີ່ຢູ່ໃນແຂວງຢູດາຍ ຕ້ອງປົບໜີໄປຍັງພູທັງຫຼາຍ, ໃຫ້ຜູ້ທີ່ຢູ່ໃນເມືອງຕ້ອງອອກໄປ.” (ລູກາ 21:20, 21). ຜູ້ບັນຊາການທະຫານ ໄກອຸສ ເຊຕຽວ ກາລຸສ (Gaius Cestius Gallus) ໄດ້ນຳກອງທັບໂຣມມາອ້ອມນະຄອນເຢຣູຊາເລັມ ແລ້ວກໍຖອນທັບກັບເມື່ອຢ່າງກະທັນຫັນໂດຍບໍ່ມີໃຜຄາດຄິດ. ກ່ອນທີ່ຈະຖອຍທັບໄປ ສະຖານະການເບິ່ງຄືເໝາະສົມໃຫ້ທະຫານໂຣມໂຈມຕີທັນທີ. ໃນຂະນະນັ້ນ ຊາວເມືອງເຢຣູຊາເລັມ

[3] ມິນມານ (Milman), *ປະຫວັດຊາວຢິວ*, ເຫຼັ້ມທີ 13.

[4] ມິນມານ, *ປະຫວັດຊາວຢິວ*, ເຫຼັ້ມທີ 13.

ບໍ່ມີຄວາມຫວັງວ່າຈະສາມາດຕ້ານທານການບຸກໄວ້ໄດ້ ຈຶ່ງພ້ອມທີ່ຈະຍົກທຸງຂາວຍອມຈຳນົນຢູ່ແລ້ວ, ແຕ່ແມ່ທັບໂຣມກຳຖອຍທັບ ໂດຍບໍ່ປາກົດວ່າເພິ່ນຈະມີເຫດຜົນອັນໃດເລີຍ, ພຣະເຈົ້າຊົງຄວບຄຸມສະຖານະການ ເພື່ອປະໂຫຍດຂອງປະຊາກອນຂອງພຣະອົງ. ນີ້ແມ່ນໝາຍສຳຄັນທີ່ພຣະອົງສັນຍາໄວ້ ໃຫ້ພວກຄຣິສຕຽນທີ່ລໍຖ້າໃນເວລານັ້ນ; ເປັນໂອກາດທີ່ເປີດໄວ້ໃຫ້ແກ່ທຸກຄົນທີ່ຍອມເຊື່ອຟັງຄຳເຕືອນຂອງພຣະຜູ້ໂຜດໃຫ້ພົ້ນ. ພຣະເຈົ້າຊົງຄວບຄຸມເຫດການ ເພື່ອຈະບໍ່ມີຄົນຢິວ ຫຼື ຊາວໂຣມຄົນໃດຂັດຂວາງການປົບໜີຂອງພວກຄຣິສຕຽນ. ເມື່ອແມ່ທັບເຊຕຽວຖອຍທະຫານກັບເມືອ ພວກຊາວຢິວກໍອອກຈາກນະຄອນເຢຣູຊາເລັມ ແລະ ໄລ່ຕາມກອງທັບໂຣມ, ໃນຂະນະທີ່ສອງຝ່າຍກຳລັງຕໍ່ສູ້ກັນຢູ່ ພວກຄຣິສຕຽນກໍມີໂອກາດໜີອອກຈາກເມືອງ. ໃນເວລານັ້ນ ພວກສັດຕູທີ່ອາໄສຢູ່ຕາມຊົນນະບົດບໍ່ໄດ້ຢູ່ໃນແຖບນັ້ນ ຈຶ່ງບໍ່ມີຜູ້ໃດສະກັດກັ້ນການໜີ, ສາເຫດກໍຍ້ອນວ່າເວລາທີ່ທະຫານໂຣມມາລ້ອມເມືອງແມ່ນເຫດສະການ “ປຸກຕູບຢູ່” ແລະຄົນຢິວທຸກຄົນມາຮວມຕົວກັນ ເພື່ອສະເຫຼີມສະຫຼອງເທດສະການ; ສະນັ້ນ, ພວກຄຣິສຕຽນທົ່ວແຜ່ນດິນຈຶ່ງສາມາດໜີໂດຍບໍ່ມີຜູ້ໃດບຽດບຽນ. ພວກເຂົາຟ້າວໜີໄປບ່ອນທີ່ປອດໄພ ຄືເມືອງເປລາ (Pella) ໃນດິນແດນເປເຣຍ ຢູ່ຟາກເບື້ອງແມ່ນ້ຳຈໍແດນພຸ້ນ. {GC 30.2}

ກອງກຳລັງຊາວຢິວທີ່ໄລ່ຕາມແມ່ທັບເຊຕຽວກັບກອງທັບໂຣມ ໄດ້ໂຈມຕີທ້າຍຂະບວນຢ່າງດຸເດືອດ ຈົນຢ້ານວ່າຈະສາມາດທຳລາຍພວກເຂົາໃຫ້ໝົດ. ກອງທັບໂຣມຈຶ່ງຖອຍທັບຕໍ່ໄປດ້ວຍຄວາມຍາກລຳບາກ, ສ່ວນຊາວຢິວແທບຈະບໍ່ໄດ້ຮັບຄວາມເສຍຫາຍ ຈຶ່ງນຳສິ່ງຂອງທີ່ຍຶດກັບເມືອນະຄອນເຢຣູຊາເລັມ ພ້ອມກັບໂຮ່ຮ້ອງສຽງ ‘ໄຊໂຍ.’ ເຖິງແມ່ນວ່າເຫດການນີ້ຈະເບິ່ງເປັນຄວາມສຳເລັດ ແຕ່ມັນສົ່ງຜົນໃຫ້ເກີດເລື່ອງຮ້າຍຕໍ່ມາ, ເພາະເປັນເຫດໃຫ້ພວກເຂົາຍິ່ງຕໍ່ຕ້ານພວກໂຣມຫຼາຍຂຶ້ນ ຈົນມີຄວາມພິນາດເກີນບັນລະຍາຍຕົກສູ່ນະຄອນນັ້ນຢ່າງໄວວາ. {GC 31.1}

ຄວາມປ່າເຖື່ອນ

ຕໍ່ມາ ເມື່ອແມ່ທັບຕີໂຕມາປິດລ້ອມນະຄອນເຢຣູຊາເລັມອີກ ກໍເກີດໄພພິບັດຄັ້ງໃຫຍ່. ເວລານັ້ນ ແມ່ນເທດສະການປັດສະຄາ ແລະ ມີຄົນຢິວກວ່າລ້ານຄົນຮວມກັນຢູ່ພາຍໃນກຳແພງເມືອງ. ສະບຽງອາຫານທີ່ເຄີຍກັກຕຸນໄວ້ ຄົງພຽງພໍໃຫ້ຄົນໃນເມືອງກິນຢູ່ຫຼາຍປີ ແຕ່ອາຫານເຫຼົ່ານັ້ນ ໄດ້ຖືກທຳລາຍຍ້ອນຄວາມອິດສາ ແລະ ການແກ້ແຄ້ນຂອງກຸ່ມຕ່າງ ໆ ຂອງຊາວຢິວທີ່ຂັດແຍ້ງກັນເອງ ຈຶ່ງເກີດພາວະອົດຢາກຢ່າງຮ້າຍແຮງ. ເຂົ້າສາລີພຽງໜ້ອຍດຽວຂາຍລາຄາໜຶ່ງຕະລັນຕົນ ເຊິ່ງເທົ່າກັບຄ່າແຮງງານຂອງກຳມະກອນຄົນໜຶ່ງເກືອບ 20 ປີ. ຄົນທີ່ຫິວແຮງຈົນເຈັບທ້ອງກໍເອົາສາຍແອວໜັງ, ເກີບໜັງ ຫຼື ວ່າໜັງຫຸ້ມໂລ້ມາກັດແທ້ນກິນ. ມີຄົນຈຳນວນຫຼວງຫຼາຍລັກອອກໄປໃນກາງຄືນ ເພື່ອເກັບໃບໄມ້ນອກກຳແພງເມືອງ ເຖິງແມ່ນວ່າຫຼາຍຄົນຖືກຈັບ ແລະ ຖືກຂ້າຖິ້ມດ້ວຍການທໍລະມານຢ່າງໂຫດຫ້ຽມກໍຕາມ. ມີຫຼາຍຄັ້ງທີ່ເຈົ້າຂອງກັບເຂົ້າເມືອງຢ່າງປອດໄພ ແຕ່ຖືກຄົນອື່ນປຸ້ນເອົາໃບຜັກໃບຫຍ້າທີ່ຕົນອົດສາສ່ຽງຊີວິດເກັບຫາມາໄດ້. ຄົນມີອຳນາດໄດ້ທໍລະມານຜູ້ທີ່ຢູ່ໃຕ້ອຳນາດຢ່າງຜິດມະນຸດສະທຳ ເພື່ອບັງຄັບໃຫ້ພວກທີ່ຫິວໂຊເຫຼົ່ານັ້ນ ມອບອາຫານໃຫ້ແກ່ພວກເຂົາ ໃນກໍລະນີທີ່ໄດ້ເຊື່ອງຊ່ອນອາຫານໄວ້ເລັກໜ້ອຍ. ຫຼາຍເທື່ອ ຄົນທີ່ທໍລະມານຄົນອື່ນເຊັ່ນນີ້ ກໍກິນອີ່ມໜຳສຳລານ ແຕ່ຢາກກັກຕຸນອາຫານໄວ້ສຳລັບອະນາຄົດເທົ່ານັ້ນ. {GC 31.2}

ຫຼາຍພັນຄົນເສຍຊີວິດຍ້ອນຂາດອາຫານ ແລະ ພະຍາດໂຣກລະບາດ. ຄວາມຮັກແພງເອັນດູທີ່ຄວນມີໃນຄອບຄົວເບິ່ງຄືຫາຍໄປໝົດແລ້ວ; ຜົວລັກອາຫານເມຍ ແລະ ເມຍກໍລັກອາຫານຜົວ; ລູກ

ກ່ຍາດເອົາອາຫານຈາກປາກຂອງພໍ່ແມ່ຜູ້ແກ່ຊະລາ. ຜູ້ເຜີຍພຣະທຳເຄີຍຖາມວ່າ, “ຍິງຜູ້ໜຶ່ງລືມໄລ ລູກທີ່ຕົນຄອດໄດ້ຫຼືບໍ່?” ຄຳຖາມນີ້ກໍໄດ້ຮັບຄຳຕອບພາຍໃນກຳແພງນະຄອນທີ່ຖືກສາບ. “ບັນດາ ແມ່ຍິງຜູ້ມີຄວາມເມດຕາສົງສານ ກໍໄດ້ເອົາລູກຂອງຕົນມາຕົ້ມກິນດ້ວຍມືຂອງພວກເຂົາເອງ, ເຊິ່ງໄດ້ ກາຍເປັນອາຫານຂອງພວກເຂົາ ໃນຊ່ວງເວລາທີ່ພີ່ນ້ອງຮ່ວມຊາດຂອງຂ້ານ້ອຍຖືກທຳລາຍ.” (ເອຊາຢາ 49:15; ເພງຄ່ຳຄວນ 4:10 LCV). ຄຳຕັກເຕືອນທີ່ຜູ້ເຜີຍພຣະທຳເຄີຍກ່າວໄວ້ 1,400 ປີ ກ່ອນ ໜ້ານັ້ນ ກໍສຳເລັດອີກເທື່ອໜຶ່ງວ່າ: “ແມ່ນແຕ່ຍິງຜູ້ດີມີຖານະສູງ ທີ່ລ້ຳລວຍຮັ່ງມີ ແລະ ບໍ່ເຄີຍ ຍ່າງໄປມາໃສ່ໂດຍຕົນເອງຈັກເທື່ອ ກໍຈະປະພຶດແບບດຽວກັນ. ເມື່ອສັດຕູປິດລ້ອມເມືອງຂອງນາງຢູ່ ນັ້ນ ນາງຈະກາຍເປັນຄົນໝົດຫວັງ ເພາະຂາດອາຫານການກິນ ຈົນຕ້ອງລີ້ກິນລູກຂອງຕົນເອງທີ່ ຫາກໍເກີດໃໝ່ໆ ຕະຫຼອດທັງສາຍແຮ່ດ້ວຍ ນາງຈະບໍ່ຍອມແບ່ງປັນໃຫ້ຜົວທີ່ຮັກ ແລະ ລູກຄົນອື່ນໆ ຂອງຕົນກິນນຳ.” (ພຣະບັນຍັດສອງ 28:56, 57). *{GC 32.1}*

ພວກຜູ້ນຳທະຫານໂຣມພະຍາຍາມຊູ່ໃຫ້ຊາວຢິວຢ້ານກົວ ເພື່ອພວກເຂົາຈະຍອມຈຳນົນ. ຊະເລີຍ ທີ່ຕໍ່ສູ້ເມື່ອຖືກຈັບກໍຈະຖືກຕີດ້ວຍແສ້, ຖືກທໍລະມານ ແລະ ຖືກຄຶງໄວ້ທີ່ໄມ້ກາງແຂນຢູ່ຕໍ່ໜ້າກຳແພງ ເມືອງ; ທຸກມື້ກໍມີຄົນຫຼັກຮ້ອຍຖືກປະຫານຊີວິດດ້ວຍການຄຶງເຊັ່ນນີ້. ເຫດການອັນເປັນຕາຢ້ານກົວ ດັ່ງກ່າວ ກໍສືບຕໍ່ຈົນຮ່ອມພູເຢໂຮຊາຟັດ ແລະ ພູເຂົາຄານວາຣີ ມີໄມ້ກາງແຂນປັກກັນໄວ້ຖີ່ຫຼາຍ ຈົນຍາກ ທີ່ຈະຍ່າງຜ່ານໄປໄດ້. ຊາວຢິວເຄີຍກ່າວຄຳສາບແຊ່ງອັນໜັກໜ່ວງຕໍ່ໜ້າບັນລັງພິພາກສາຂອງປີລາດ ວ່າ: “ໃຫ້ໂທດເລື່ອງຄວາມຕາຍຂອງລາວ ຕົກຖືກພວກເຮົາ ແລະ ລູກຫຼານຂອງພວກເຮົາ.” (ມັດທາຍ 27:25). ຄຳສາບນີ້ຕົກຖືກພວກເຂົາຢ່າງຮ້າຍແຮງ. *{GC 32.2}*

ພຣະວິຫານຖືກທຳລາຍ

ແມ່ທັບຕີໂຕຄົງຍິນດີໃຫ້ເຫດຮ້າຍເຫຼົ່ານີ້ສິ້ນສຸດລົງ ເພື່ອນະຄອນເຢຣູຊາເລັມຈະບໍ່ຕ້ອງຮັບເອົາຜົນ ຄຳສາບແຊ່ງຢ່າງເຕັມທີ່. ເພິ່ນຕົກໃຈຢ້ານທີ່ເຫັນຊາກສົບຄົນຕາຍກອງຂຶ້ນສູງຕາມຮ່ອມພູ. ຕີໂຕຢືນຢູ່ເທິງ ຍອດພູເຂົາໝາກກອກເທດ ແລະ ເບິ່ງໄປຍັງພຣະວິຫານອັນສະຫງ່າງາມເໝືອນຖືກສະກົດຈິດ. ເພິ່ນ ສັ່ງທະຫານບໍ່ໃຫ້ແຕະຕ້ອງກ້ອນຫີນໃຫຍ່ຂອງພຣະວິຫານນັ້ນແມ່ນແຕ່ກ້ອນດຽວ. ກ່ອນທີ່ຈະບຸກຢຶດ ເຂດພຣະວິຫານອັນແຂງແກ່ນນັ້ນ ເພິ່ນຮ້ອງຂໍພວກຜູ້ນຳຊາວຢິວດ້ວຍຄວາມຈິງໃຈວ່າ ຢ່າຫົວດື້ຂັດຂືນ ເພາະວ່າບໍ່ຢາກໃຫ້ພຣະວິຫານເປັນມົນທິນຍ້ອນເລືອດຂອງຄົນທີ່ຈະຖືກຂ້າ. ຖ້າພວກເຂົາຍອມອອກມາ ຕໍ່ສູ້ຢູ່ບ່ອນອື່ນ ກໍຈະບໍ່ມີທະຫານໂຣມເຂົ້າໄປໃນບ່ອນສັກສິດນັ້ນ. ທ່ານໂຢເຊຟັດ (Josephus) ເອງໄດ້ ອ້ອນວອນຢ່າງສຸດຝີປາກ ເພື່ອໂນ້ມນ້າວພວກເຂົາໃຫ້ຍອມຈຳນົນ ເຊິ່ງຈະເປັນທາງລອດພົ້ນໃຫ້ນະຄອນ ຂອງພວກເຂົາ, ສະຖານນະມັດສະການ ແລະ ພວກເຂົາເອງ. ແຕ່ຖ້ອຍຄຳຂອງເພິ່ນຖືກໂຕ້ຕອບດ້ວຍ ຄຳຫຍາບຄາຍຢ່າງຂົ່ມຂື່ນ. ມີຄົນແກວ່ງລູກສອນໃສ່ຜູ້ໄກ່ເກ່ຍຄົນສຸດທ້າຍນີ້ ໃນຂະນະທີ່ເພິ່ນຢືນຮ້ອງຂໍ ພວກເຂົາ. ຊາວຢິວເຄີຍປະຕິເສດຄຳຮ້ອງຂໍຂອງພຣະບຸດຂອງພຣະເຈົ້າ ແລ້ວບັດນີ້ການວິງວອນຂອງ ຄົນອື່ນ ມີແຕ່ຈະເຮັດໃຫ້ພວກເຂົາຍິ່ງຂັດຂືນຫຼາຍຂຶ້ນຈົນເຖິງທີ່ສຸດ. ແມ່ທັບຕີໂຕພະຍາຍາມຮັກສາ ພຣະວິຫານບໍ່ໃຫ້ຖືກທຳລາຍ ແຕ່ກໍບໍ່ມີປະໂຫຍດຫຍັງ ເພາະວ່າພຣະເຢຊູຄຣິສ ຜູ້ຍິ່ງໃຫຍ່ກວ່າເພິ່ນໄດ້ ກ່າວໄວ້ວ່າ ຈະບໍ່ໃຫ້ມີກ້ອນຫີນທັບຊ້ອນກັນເຫຼືອຢູ່ ແມ່ນແຕ່ກ້ອນດຽວ. *{GC 32.3}*

ທະຫານໂຣມຕົກຕະລຶງ ແລະ ໃຈຮ້າຍຍ້ອນພວກຜູ້ນຳຊາວຢິວດື້ດ້ານຕາບອດ ແລະ ຍ້ອນ ປະຊາຊົນທີ່ຖືກປິດລ້ອມໃນເມືອງ ໄດ້ເຮັດອາດຊະຍາກຳອັນເປັນຕາໜ້າລັງກຽດ. ສຸດທ້າຍແມ່ທັບ ຕີໂຕ ຈຶ່ງຕັດສິນໃຈບຸກຢຶດພຣະວິຫານ, ແຕ່ມີຄວາມຕັ້ງໃຈວ່າ ຖ້າເປັນໄປໄດ້ຈະກູ້ພຣະວິຫານໄວ້ບໍ່ໃຫ້ຖືກ ທຳລາຍ. ເຖິງຢ່າງໃດກໍຕາມ, ທະຫານບໍ່ໄດ້ຟັງຄຳສັ່ງຂອງເພິ່ນ. ພໍຕົກຄ່ຳຄືນ ເມື່ອເພິ່ນກັບໄປພັກຜ່ອນ

ໃນຜ້າເຕັນຂອງຕົນ, ຊາວຢິວກໍອອກມາຈາກພຣະວິຫານ ແລະ ໂຈມຕີທະຫານໂຣມເຊິ່ງຢູ່ຂ້າງນອກ. ໃນ ລະຫວ່າງການຕໍ່ສູ້ນັ້ນ ມີທະຫານຄົນໜຶ່ງແກວ່ງຄົ້ນຟືນທີ່ລຸກໄໝ້ຢູ່ ຜ່ານປະຕູລະບຽງພຣະວິຫານເຂົ້າ ໄປຂ້າງໃນ. ທັນໃດນັ້ນຝາຫ້ອງທີ່ເຮັດດ້ວຍໄມ້ສົນສີດາກໍລຸກໄໝ້ ແລ້ວລາມໄປເຖິງຫ້ອງອື່ນໆ. ຕີໂຕ ຕາມດ້ວຍພວກນາຍພົນ ແລະ ທະຫານແລ່ນໄປເບິ່ງ ແລ້ວເພິ່ນຈຶ່ງສັ່ງໃຫ້ທະຫານມອດໄຟ ແຕ່ບໍ່ ມີຜູ້ໃດຟັງ. ພວກທະຫານໂກດຮ້າຍຫຼາຍ ຕ່າງຄົນຕ່າງແກວ່ງຟືນທີ່ລຸກໄໝ້ເຂົ້າໄປໃນຫ້ອງຕ່າງໆ ທີ່ຕິດກັບພຣະວິຫານ ແລ້ວກໍຊັກດາບອອກມາ ຂ້າຟັນຄົນທີ່ລີ້ໄພໃນນັ້ນຈຳນວນຫຼວງຫຼາຍ ຈົນເຮັດໃຫ້ ເລືອດໄຫຼລົງຂັ້ນໄດພຣະວິຫານຄືກັບສາຍນ້ຳ. ຄົນຢິວຫຼາຍພັນຄົນເສຍຊີວິດ ແຕ່ໃນຂະນະນັ້ນມີສຽງດັງ ກວ່າສຽງການຕໍ່ສູ້ດັງກ້ອງຂຶ້ນ ແມ່ນສຽງຂອງຄົນທີ່ຮ້ອງວ່າ: “ອີຄາບົດ! (Ichabod)” ແປວ່າຣັດສະໝີ ຂອງພຣະເຈົ້າໄດ້ພາກໄປເສຍແລ້ວ. *{GC 33.1}*

“ຕີໂຕບໍ່ສາມາດຫ້າມຄວາມໂກດຮ້າຍຂອງທະຫານໄດ້. ເພິ່ນເຂົ້າໄປກວດເບິ່ງພາຍໃນພຣະວິຫານ ກັບເຈົ້າໜ້າທີ່ຂອງເພິ່ນ. ພວກເຂົາອັດສະຈັນໃຈກັບຄວາມງົດງາມຮຸ່ງເຮືອງ. ໃນຂະນະນັ້ນໄຟຍັງລາມ ບໍ່ຮອດສະຖານສັກສິດ ເພິ່ນຈຶ່ງພະຍາຍາມເປັນເທື່ອສຸດທ້າຍ ເພື່ອປ້ອງກັນບໍ່ໃຫ້ຫ້ອງສັກສິດຖືກ ທຳລາຍ. ຕີໂຕຈຶ່ງແລ່ນອອກມາ ຮ້ອງຂໍໃຫ້ທະຫານດັບໄຟບໍ່ໃຫ້ລາມໄປອີກ. ນາຍຮ້ອຍຄົນໜຶ່ງ ຊື່ວ່າ ລີເບຣາລິດ (Liberalis) ໄດ້ຍົກໄມ້ຄ້ອນປະຈຳຕຳແໜ່ງຂຶ້ນ ຫວັງບັງຄັບໃຫ້ທະຫານຍອມຟັງຄຳສັ່ງ ແຕ່ ວ່າຄວາມນັບຖືທີ່ທະຫານມີຕໍ່ອົງຈັກກະພັດ ກໍບໍ່ສາມາດຢຸດຢັ້ງພວກເຂົາໄດ້ຍ້ອນສາມສາເຫດຄື ຄວາມ ຄຽດແຄ້ນເຄືອງໃຈທີ່ມີຕໍ່ຄົນຢິວ, ຄວາມດຸເດືອດໃນລະຫວ່າງການຕໍ່ສູ້ ແລະ ຄວາມບໍ່ຮູ້ຈັກພໍທີ່ຫວັງວ່າ ຈະໄດ້ປຸ້ນເອົາຊັບສົມບັດໃຫ້ຫຼາຍທີ່ສຸດ. ພວກທະຫານເຫັນທຸກສິ່ງອ້ອມຮອບຕົວເປັນທອງຄຳທີ່ສະທ້ອນ ແສງໄຟແວວວາວ ແລະ ຄິດວ່າພາຍໃນຫ້ອງສັກສິດຂອງພຣະວິຫານ ຕ້ອງມີຊັບສົມບັດອັນປະເມີນຄ່າ ບໍ່ໄດ້. ມີທະຫານຄົນໜຶ່ງລັກສອດກະບອງໄຟເຂົ້າໄປຜ່ານບານພັບປະຕູ ໃນທັນໃດນັ້ນທັ້ງອາຄານກໍລຸກ ເປັນໄຟ. ຍ້ອນຄວັນໜາ ແລະ ໄຟ ພວກເຈົ້າໜ້າທີ່ຈຶ່ງຕ້ອງຖອຍອອກມາ ແລະ ປ່ອຍໃຫ້ຕຶກອາຄານ ອັນສະຫງ່າງາມນັ້ນ ເປັນໄປຕາມສະພາບການຂອງມັນ.” *{GC 33.2}*

“ຖ້າພາບທີ່ເຫັນນັ້ນເປັນຕາໜ້າຕົກໃຈສຳລັບທະຫານໂຣມ ແລ້ວມັນເປັນແນວໃດໃນສາຍຕາຄົນຢິວ? ຈອມພູເຂົາທັງຍອດ ອັນເປັນດັ່ງມົງກຸດຂອງນະຄອນນັ້ນ ກໍລຸກໄໝ້ຄ້າຍຄືພູເຂົາໄຟ. ອາຄານຕ່າງໆ ກໍພັງເພລົງໄປຕາມໆກັນດ້ວຍສຽງດັງສະໜັ່ນ ແລ້ວຊາກອາຄານເຫຼົ່ານັ້ນ ກໍຖືກກືນກິນດ້ວຍໄຟທີ່ ໄໝ້ຢ່າງຮຸນແຮງດັ່ງເຕົາບະຮົກ. ແຜ່ນໄມ້ສົນສີດາເທິງຫຼັງຄາລຸກໄໝ້ເປັນແຜ່ນໄຟ, ຍອດຫໍຕ່າງໆ ທີ່ໂອບດ້ວຍທອງຄຳ ຖືກເຜົາຮ້ອນຈົນກາຍເປັນສີແດງ, ສ່ວນຫໍໜ້າປະຕູໃຫຍ່ສົ່ງໄຟ ແລະ ຄວັນຂຶ້ນ ສູ່ຟ້າຄືກັບເມນເຜົາສົບ. ເນີນພູທີ່ອ້ອມຮອບກໍສະຫວ່າງສະໄຫວ. ມີຄົນຈັບກຸ່ມກັນເບິ່ງພາບສະຫຍອງ ດ້ວຍຄວາມຕື່ງຄຽດ ໃນຂະນະທີ່ການທຳລາຍຂະຫຍາຍວົງກວ້າງອອກໄປ. ມີຄົນແອອັດຢູ່ເທິງກຳແພງ ເມືອງ ແລະ ບ່ອນສູງຕ່າງໆໃນນະຄອນ; ໜ້າຕາບາງຄົນຊີດຂາວຍ້ອນຄວາມທຸກໃຈ ແລະ ຄວາມ ກັງວົນ, ສ່ວນຄົນອື່ນກໍໜ້າບຶ້ງໜ້າຂຶມ ຍ້ອນຄວາມຄັບແຄ້ນໃຈ. ສຽງທະຫານໂຣມໂຮ່ຮ້ອງດັງຂະນະທີ່ ແລ່ນໄປມາ, ກັບສຽງຮ້ອງຄວນຄາງຂອງພວກກະບົດເຊິ່ງກຳລັງພິນາດໃນກອງໄຟກໍດັງຂຶ້ນປະສົມ ປະສານກັບສຽງດັງຂອງແປວໄຟ ແລະ ສຽງດັງສະໜັ່ນຂອງໄມ້ຄານເຮືອນທີ່ພັງລົງມາ. ມີສຽງຮ້ອງກີກ ສະທ້ອນຕາມເນີນພູ ກັບສຽງເມື່ອງນັນຂອງຄົນທີ່ຢູ່ເທິງບ່ອນສູງ, ສ່ວນຕະຫຼອດແນວກຳແພງມີແຕ່ສຽງ ຮ້ອງໄຫ້ຄວນຄາງ. ຄົນທີ່ກຳລັງຂາດໃຈຍ້ອນຄວາມອົດຢາກ ກໍຮວບຮວມກຳລັງເພື່ອຮ້ອງໂຮ່ເປັນຄັ້ງ ສຸດທ້າຍ ເພາະຄວາມທຸກ ແລະ ຄວາມພິນາດທີ່ເກີດຂຶ້ນ.” *{GC 34.1}*

“ການຂ້າຟັນກັນພາຍໃນນະຄອນນັ້ນ ຍັງເປັນຕາຢ້ານກວ່າເຫດການຂ້າງນອກ. ເກີດການນອງ

ເລືອດ, ທັງຊາຍທັງຍິງ, ໜຸ່ມສາວ ແລະ ຄົນຊະລາ, ພວກກະບົດ ແລະ ພວກປະໂຣຫິດ, ທັງຄົນ ທີ່ຕໍ່ສູ້ ແລະ ຄົນທີ່ອ້ອນວອນຂໍຄວາມເມດຕາ ຕ່າງກໍຖືກຟາດຟັນແບບບໍ່ເລືອກໜ້າ. ຈຳນວນຄົນທີ່ ຖືກຂ້າຫຼາຍກວ່າທະຫານທີ່ຂ້າພວກເຂົາ ຈົນທະຫານໂຣມຕ້ອງປົນຂ້າມກອງຊາກສົບ ເພື່ອສືບຕໍ່ການ ທຳລາຍ."[5] *{GC 35.1}*

ພາຍຫຼັງພຣະວິຫານຖືກທຳລາຍ

ຫຼັງຈາກພຣະວິຫານຖືກທຳລາຍບໍ່ດົນ, ນະຄອນເຢຣູຊາເລັມທັງໝົດ ກໍຕົກຢູ່ໃນກຳມືຂອງທະຫານ ໂຣມ. ພວກຜູ້ນຳຂອງຊາວຢິວກໍອອກຈາກປ້ອມ ແລະ ຫໍຄອຍອັນແຂງແຮງໜຽວແໜ້ນ, ແມ່ທັບຕີໂຕ ຈຶ່ງເຂົ້າໄປໄດ້ ເພາະບໍ່ມີຜູ້ໃດຢູ່ໃນນັ້ນ. ເພິ່ນເບິ່ງປ້ອມອັນຍິ່ງໃຫຍ່ເຫຼົ່ານັ້ນດ້ວຍຄວາມອັດສະຈັນໃຈ ແລະ ປະກາດວ່າ ຕ້ອງແມ່ນພຣະເຈົ້າປະທານໃຫ້ແນ່ນອນ ເພາະບໍ່ມີເຄື່ອງພັງກຳແພງໃດເລີຍ ທີ່ສາມາດ ເຈາະປ້ອມເຫຼົ່ານັ້ນໄດ້. ເມືອງທັງໝົດພ້ອມດ້ວຍພຣະວິຫານຖືກທຳລາຍລົງພຽງໜ້າດິນ ແລະ ດິນ ນັ້ນກໍ "ຖືກໄຖດັ່ງໄຖນາ." (ເຢເຣມີຢາ 26:18). ມີຄົນເສຍຊີວິດຫຼາຍກວ່າໜຶ່ງລ້ານຄົນໃນເຫດການ ປິດລ້ອມເມືອງ ແລະ ການຂ້າຟັນກັນທີ່ຕາມມາ. ສ່ວນຄົນທີ່ລອດຕາຍນັ້ນ ບາງຄົນຖືກຈັບໄປເປັນ ຂະເລີຍ, ບາງຄົນຖືກຂາຍເປັນທາດ, ບາງຄົນຖືກລາກກັບໄປຍັງນະຄອນໂຣມເພື່ອໃຫ້ນາຍພົນອວດ ໄຊຊະນະ, ບາງຄົນຖືກໂຍນໄປໃຫ້ສັດປ່າກິນໃນສະໜາມກີລາ ເພື່ອສ້າງຄວາມບັນເທີງ ແລະ ບາງຄົນ ກໍພະເນຈອນໄປໃນໂລກ ຄືກັບຄົນບໍ່ມີເຮືອນຢູ່. *{GC 35.2}*

ຄົນຢິວໄດ້ຫາເລື່ອງໃສ່ຕົວເໝືອນດັ່ງຄົນທີ່ຕໍ່ສາຍໂສ້ມັດຕົນເອງ, ການກະທຳຂອງພວກເຂົາເປັນ ເຫດໃຫ້ຕ້ອງຮັບໂທດ ເໝືອນກັບວ່າ ພວກເຂົາໄດ້ຕື່ມຄວາມບາບໃສ່ຈອກແຫ່ງການລົງໂທດຈົນເຕັມ ດ້ວຍມືຂອງຕົນເອງ. ຄວາມພິນາດທີ່ເກີດຂຶ້ນກັບຊົນຊາດຢິວ ແລະ ບັນຫາທຸກຢ່າງເຊິ່ງຄົນລອດ ຕາຍທີ່ກະຈັດກະຈາຍຕ້ອງປະສົບພົບພໍ້ນັ້ນ ລ້ວນແຕ່ເປັນການເກັບກ່ຽວຜົນຈາກເມັດທີ່ພວກເຂົາເອງ ເປັນຜູ້ຫວ່ານ. ຜູ້ເຜີຍພຣະທຳກ່າວວ່າ: "ໂອ ອິດສະຣາເອນເອີຍ ເຈົ້າໄດ້ທຳລາຍຕົນເອງ" "ເຈົ້າ ສະດຸດກໍເພາະຄວາມຊົ່ວຊ້າຂອງເຈົ້າ." (ໂຮເສອາ 13:9 TKJV; 14:1 TKJV). ຫຼາຍຄົນມັກ ເວົ້າວ່າ ຄວາມທຸກຂອງຄົນຢິວເກີດຈາກການລົງໂທດຂອງພຣະເຈົ້າ ແລະ ຊາຕານຜູ້ທີ່ເປັນຈອມ ຫຼອກລວງ ກໍຢາກໃຫ້ຄົນເຂົ້າໃຈຜິດຢ່າງນັ້ນ ເພາະເປັນການປິດບັງຜົນງານຂອງມັນເອງ. ແຕ່ ຊາວຢິວໄດ້ປະຕິເສດຄວາມຮັກ ແລະ ຄວາມເມດຕາຂອງພຣະເຈົ້າຢ່າງໃຈແຂງກະດ້າງ ເປັນເຫດ ໃຫ້ພຣະອົງຖອນການປົກປ້ອງຄຸ້ມຄອງອອກໄປຈາກພວກເຂົາ ແລະ ຍອມໃຫ້ຊາຕານປົກຄອງຄົນ ອິດສະຣາເອນຕາມໃຈຂອງມັນ. ຄວາມໂຫດຫ້ຽມປ່າເຖື່ອນທີ່ເກີດຂຶ້ນໃນຊ່ວງລະຫວ່າງການທຳລາຍ ນະຄອນເຢຣູຊາເລັມນັ້ນ ເປັນຕົວຢ່າງຂອງຄວາມອາຄາດທີ່ຊາຕານມີຕໍ່ຄົນທີ່ຍອມຕົກຢູ່ພາຍໃຕ້ອຳນາດ ຂອງມັນ. *{GC 35.3}*

ຍຸກສຸດທ້າຍ

ເຮົາບໍ່ສາມາດຢັ່ງຮູ້ໄດ້ວ່າ ພຣະຄຣິສຊົງຊ່ວຍເຫຼືອພວກເຮົາຫຼາຍສໍ່າໃດ ທີ່ພວກເຮົາໄດ້ຮັບຄວາມ ສະຫງົບສຸກ ແລະ ການປົກປ້ອງຄຸ້ມຄອງໃຫ້ປອດໄພ. ຍ້ອນຣິດອຳນາດຂອງພຣະເຈົ້າໄດ້ຢັບຢັ້ງຊາຕານ ໄວ້ ມັນຈຶ່ງບໍ່ສາມາດຄອບງຳຊີວິດຂອງມະນຸດໄດ້ທັງໝົດ. ຄົນທີ່ບໍ່ເຊື່ອຟັງ ແລະ ພວກເນລະຄຸນ ທັງຫຼາຍ ສົມຄວນຂອບຄຸນພຣະເຈົ້າ ທີ່ພຣະອົງຊົງຫ້າມອຳນາດຊົ່ວຮ້າຍຂອງຊາຕານ ດ້ວຍຄວາມ ເມດຕາ ແລະ ຄວາມອົດທົນຂອງພຣະອົງ. ແຕ່ເມື່ອມະນຸດພົ້ນຂີດພຣະເມດຕາແລ້ວ ການຄຸ້ມຄອງ

[5] ມິນມານ, *ປະຫວັດຊາວຢິວ*, ເຫຼັ້ມທີ 16.

ກໍຖືກຖອນຄືນ. ພຣະເຈົ້າບໍ່ເໝືອນເຈົ້າໜ້າທີ່ຝ່າຍປົກຄອງຜູ້ເປັນມະນຸດ ທີ່ລົງໂທດຄົນທີ່ເຮັດຜິດຕໍ່ກົດໝາຍຕາມຄຳພີພາກສາ, ແຕ່ພຣະອົງຊົງປ່ອຍຜູ້ທີ່ປະຕິເສດພຣະເມດຕາຂອງພຣະອົງ ໃຫ້ຮັບຜົນຈາກການກະທຳຂອງຕົນເອງ. ທຸກຄັ້ງທີ່ມະນຸດປະຕິເສດຄວາມສະຫວ່າງ, ທຸກຄັ້ງທີ່ດູຖູກບໍ່ເອົາໃຈໃສ່ຕໍ່ຄຳຕັກເຕືອນ, ທຸກຄັ້ງທີ່ໃຫ້ອາລົມເປັນໃຫຍ່ ແລະ ທຸກຄັ້ງທີ່ລະເມີດຕໍ່ກົດບັນຍັດຂອງພຣະເຈົ້າ ແມ່ນການຫວ່ານເມັດພືດແຫ່ງຄວາມຊົ່ວຮ້າຍລົງໃນດິນ ເຊິ່ງຈະຕ້ອງເກັບກ່ຽວພາຍຫຼັງຢ່າງແນ່ນອນ. ເມື່ອຂັດຂືນຕໍ່ພຣະວິນຍານຂອງພຣະເຈົ້າຢ່າງຕໍ່ເນື່ອງ ສຸດທ້າຍພຣະວິນຍານນັ້ນກໍຈະຖືກຖອນໄປຈາກຄົນບາບ ແລ້ວກໍບໍ່ເຫຼືອອຳນາດທີ່ຈະຄວບຄຸມອາລົມຄວາມຕ້ອງການ ແລະ ບໍ່ມີແນວປ້ອງກັນພວກເຂົາຈາກຄວາມກຽດຊັງ ແລະ ການປອງຮ້າຍຂອງຊາຕານ. ການທຳລາຍນະຄອນເຢຣູຊາເລັມເປັນບົດຮຽນທີ່ຕັກເຕືອນຢ່າງໃຫຍ່ຫຼວງ ແລະ ເປັນຕາຢ້ານ ສຳລັບທຸກຄົນທີ່ເຫັນວ່າພຣະຄຸນຂອງພຣະເຈົ້າເປັນເລື່ອງບໍ່ສຳຄັນ ແລະ ທຸກຄົນທີ່ຂັດຂືນຕໍ່ສຽງຮຽກຮ້ອງແຫ່ງພຣະເມດຕາຂອງພຣະເຈົ້າ. ບໍ່ເຄີຍມີຫຼັກຖານທີ່ຊັດເຈນກວ່ານີ້ອີກວ່າ ພຣະເຈົ້າຊົງກຽດຊັງຄວາມບາບ ແລະ ຄົນຜິດຈະຕ້ອງຮັບໂທດຢ່າງແນ່ນອນ. *{GC 36.1}*

ຄຳທຳນວາຍຂອງພຣະຜູ້ໂຜດໃຫ້ພົ້ນ ເລື່ອງການລົງໂທດນະຄອນເຢຣູຊາເລັມນັ້ນ ຈະສຳເລັດອີກເທື່ອໜຶ່ງ ເຊິ່ງເຫດການທຳລາຍນະຄອນຫຼວງຂອງອິດສະຣາເອນໃນຄາວນັ້ນເປັນພຽງເງົາສະຫຼົວ. ເພາະວ່າໄພພິບັດເຊິ່ງຕົກສູ່ນະຄອນທີ່ພຣະເຈົ້າຊົງເລືອກນັ້ນ ສະທ້ອນໃຫ້ເຫັນເຖິງຄວາມພິນາດຂອງໂລກມະນຸດທີ່ປະຕິເສດພຣະເມດຕາຈາກພຣະເຈົ້າ ແລະ ຢຽບຢ້ຳກົດບັນຍັດຂອງພຣະອົງ. ປະຫວັດສາດອັນມືດດຳແຫ່ງອາດຊະຍາກຳ ແລະ ຄວາມທຸກຂອງມະນຸດສືບຕໍ່ເນື່ອງກັນມາຫຼາຍຮ້ອຍປີ. ຜູ້ໃດຄິດເຖິງເລື່ອງນີ້ຍາມໃດກໍຮູ້ສຶກບໍ່ສະບາຍໃຈ, ຍິ່ງຄິດຫຼາຍກໍຍິ່ງໜັກໃຈ. ການປະຕິເສດອຳນາດຂອງສະຫວັນໄດ້ສ້າງຜົນເສຍຫາຍທີ່ຮ້າຍແຮງ. ແຕ່ພາບອັນມືດດຳກວ່ານັ້ນຍັງໄດ້ເປີດເຜີຍໃຫ້ເຫັນຜ່ານຄຳພະຍາກອນ. ໃນການບັນທຶກປະຫວັດສາດມີເລື່ອງການຕໍ່ສູ້, ຄວາມຂັດແຍ້ງ, ການປະຕິວັດ ແລະ “ການສູ້ຮົບທັງໝົດຂອງນັກຮົບອັນມີສຽງອຶ ກທຶ ກ ແລະ ເສື້ອຄຸມອັນເປື້ອນດ້ວຍເລືອດ.” (ເອຊາຢາ 9:5 ດັດແປງຈາກສະບັບ TKJV.) ແຕ່ສິ່ງເຫຼົ່ານີ້ຍັງເປັນເລື່ອງເລັກນ້ອຍ ເມື່ອທຽບກັບເຫດການອັນໜ້າຢ້ານຂອງວັນທີ່ພຣະວິນຍານຂອງພຣະເຈົ້າຈະຖືກຖອນໄປຈາກຄົນຊົ່ວຢ່າງໝົດສິ້ນ. ໃນຄາວນັ້ນຈະບໍ່ມີພຣະວິນຍານຄອຍຢັບຢັ້ງອາລົມຮຸນແຮງ ແລະ ຄວາມໂກດຮ້າຍແບບຊາຕານໄວ້ໄດ້. ໃນເວລານັ້ນ ມະນຸດທັງຫຼາຍຈະໄດ້ເຫັນເຖິງຜົນຂອງການປົກຄອງຂອງຊາຕານຢ່າງທີ່ບໍ່ເຄີຍເຫັນມາກ່ອນ. *{GC 36.2}*

ແຕ່ໃນວັນນັ້ນຄົນຂອງພຣະເຈົ້າກໍຈະໄດ້ຮັບການຊ່ວຍກູ້ ເຊັ່ນດຽວກັນກັບໃນສະໄໝທີ່ນະຄອນເຢຣູຊາເລັມຖືກທຳລາຍ, ຄືທຸກຄົນທີ່ມີຊື່ບັນທຶກໄວ້ໃນປຶ້ມທະບຽນແຫ່ງຊີວິດ. (ເບິ່ງ ເອຊາຢາ 4:3 LCV). ພຣະຄຣິສຊົງກ່າວວ່າ ພຣະອົງຈະສະເດັດກັບມາຄັ້ງທີສອງ ເພື່ອຮວບຮວມຜູ້ສັດຊື່ຂອງພຣະອົງໃຫ້ໄປຢູ່ກັບພຣະອົງ. “ເມື່ອນັ້ນ . . . ປະຊາຊາດທັງປວງແຫ່ງແຜ່ນດິນໂລກຈະຮ້ອງໄຫ້ຄວນຄາງເມື່ອພວກເຂົາຈະເຫັນບຸດມະນຸດກຳລັງມາເທິງເມກແຫ່ງສະຫວັນດ້ວຍຣິດອຳນາດ ແລະ ສະຫງ່າຣາສີອັນຍິ່ງໃຫຍ່. ພຣະອົງຈະໃຊ້ບັນດາເທວະດາຂອງພຣະອົງມາພ້ອມກັບສຽງແກດັງກ້ອງສະໜັ່ນ, ເທວະດາເຫຼົ່ານັ້ນຈະຮວບຮວມເອົາຜູ້ທີ່ເລືອກໄວ້ຈາກທັງສີ່ທິດ ຕັ້ງແຕ່ສຸດຂອບຟ້າສະຫວັນເບື້ອງໜຶ່ງຈົນເຖິງສຸດຂອບຟ້າສະຫວັນອີກເບື້ອງໜຶ່ງ.” (ມັດທາຍ 24:30, 31 LCV). ແລ້ວໃນເວລານັ້ນ ທຸກຄົນທີ່ບໍ່ປະຕິບັດຕາມຂ່າວປະເສີດ ກໍຈະຖືກປະຫານດ້ວຍລົມຈາກພຣະໂອດ[6] ຂອງພຣະອົງ ແລະ ຈະຖືກລ້າງຜານໃຫ້ດັບສູນ ດ້ວຍແສງອັນຮຸ່ງເຮືອງ ໃນເວລາທີ່ພຣະອົງສະເດັດກັບມາ. (ເບິ່ງ 2 ເທສະໂລນີກ 2:8). ເລື່ອງ

[6] *ພຣະໂອດ*: ຣາຊາສັບ ໝາຍເຖິງປາກ.

ນີ້ຈະເໝືອນຄົນອິດສະຣາເອນໃນສະໄໝບູຮານ ຄືຄົນຊົ່ວທຳລາຍຕົນເອງ ແລະ ຫຼົ້ມຈົມຍ້ອນຄວາມບາບຂອງຕົນ. ພວກເຂົາເຮັດບາບມາຕະຫຼອດ ຈົນຊີວິດຫ່າງເຫີນຈາກພຣະເຈົ້າຫຼາຍ ແລະ ອຸປະນິໄສເຕັມໄປດ້ວຍຄວາມຊົ່ວຊ້າຫຼາຍ ຈົນສະຫງ່າຣາສີຂອງພຣະເຈົ້າ ກັບກາຍເປັນໄຟທີ່ເຜົາຜານສຳລັບຕົນ. *{GC 37.1}*

ມະນຸດເອີຍ ຈົ່ງລະວັງ! ຢ່າເມີນເສີຍຕໍ່ບົດຮຽນທີ່ພຣະຄຣິສຊົງກ່າວໄວ້. ພຣະອົງໄດ້ຕັກເຕືອນສາວົກຂອງພຣະອົງ ເຖິງການທຳລາຍນະຄອນເຢຣູຊາເລັມ ແລະ ສອນໃຫ້ຮູ້ໝາຍສຳຄັນຕ່າງໆ ເພື່ອພວກເຂົາຈະໄດ້ໜີລອດ. ເຊັ່ນດຽວກັນ ພຣະອົງຊົງເຕືອນມວນມະນຸດ ເຖິງການທຳລາຍໂລກເປັນຄັ້ງສຸດທ້າຍ ແລະ ຊົງສອນໝາຍສຳຄັນ ເພື່ອໃຫ້ຮູ້ວ່າວັນນັ້ນຈວນຈະເຖິງແລ້ວ ເພື່ອວ່າທຸກຄົນຈະສາມາດໜີຄວາມຮ້າຍກາດທີ່ຈະເກີດຂຶ້ນ. ພຣະເຢຊູຊົງກ່າວວ່າ: “ຈະມີໝາຍສຳຄັນໃນດວງອາທິດ, ດວງຈັນ ແລະ ດວງດາວທັງປວງ ແລະ ຈະມີຄວາມທຸກຮ້ອນເທິງແຜ່ນດິນໂລກຕາມປະເທດຕ່າງໆ.” (ລູກາ 21:25; ມັດທາຍ 24:29; ມາຣະໂກ 13:24–26; ພຣະນິມິດ 6:12–17). ໃຫ້ຄົນທັງຫຼາຍທີ່ເຫັນເຫດການເຫຼົ່ານີ້ຈົ່ງຮູ້ວ່າ: “ເວລາມາໃກ້ແລ້ວ ພ້ອມທີ່ຈະເກີດຂຶ້ນ.” (ມັດທາຍ 24:33). ພຣະເຢຊູຈຶ່ງເຕືອນວ່າ: “ດັ່ງນັ້ນ ຈົ່ງເຝົ້າລະວັງ” (ມາຣະໂກ 13:35). ຜູ້ທີ່ເອົາໃຈໃສ່ຕໍ່ຄຳຕັກເຕືອນນີ້ ຈະບໍ່ຖືກປະຖິ້ມໃຫ້ຢູ່ໃນຄວາມມືດ ຈົນມື້ນັ້ນຫຼອນໃສ່ຢ່າງກະທັນຫັນ. ແຕ່ສຳລັບທຸກຄົນທີ່ບໍ່ເຝົ້າລະວັງຢູ່, ວັນທີ່ພຣະເຈົ້າສະເດັດມາກໍຈະເປັນດັ່ງ “ຂະໂມຍມາໃນເວລາກາງຄືນ.” (1 ເທສະໂລນີກ 5:2–5). *{GC 37.2}*

ຊາວໂລກບໍ່ພ້ອມສຳລັບວັນແຫ່ງອົງພຣະຜູ້ເປັນເຈົ້າ

ຊາວໂລກປັດຈຸບັນບໍ່ພ້ອມຮັບເອົາຄຳຕັກເຕືອນຂອງພຣະເຈົ້າທີ່ຊົງກ່າວໄວ້ສຳລັບຍຸກນີ້ ກໍບໍ່ຕ່າງຫຍັງກັບຄົນຢິວສະໄໝນັ້ນ ທີ່ບໍ່ພ້ອມຮັບເອົາຄຳເຕືອນຂອງພຣະອົງເລື່ອງການທຳລາຍນະຄອນເຢຣູຊາເລັມ. ບໍ່ວ່າຈະເກີດຂຶ້ນເວລາໃດກໍຕາມ, ແຕ່ສຳລັບຄົນອະທຳແລ້ວ ມື້ນັ້ນຈະມາຢ່າງກະທັນຫັນຈົນຕັ້ງຕົວບໍ່ທັນ. ເມື່ອຊີວິດດຳເນີນໄປຢ່າງປົກກະຕິ, ເມື່ອຄົນທັງຫຼາຍກຳລັງສະໜຸກສະໜານ, ຄ້າຂາຍ ແລະ ເຮັດວຽກຫາເງິນ, ເມື່ອຜູ້ນຳສາສະໜາຍົກຍ້ອງການພັດທະນາຂອງມະນຸດ ແລະ ທຸກຄົນຫຼົງໄຫຼໄປກັບຄວາມປອດໄພອັນປອມແປງ, ເມື່ອນັ້ນແຫຼະ ການທຳລາຍຈະເກີດຂຶ້ນຢ່າງກະທັນຫັນ ໃສ່ຄົນປະໝາດ ແລະ ຄົນຊົ່ວ ເໝືອນຂະໂມຍທີ່ແອບລັກເຄື່ອງເວລາທ່ຽງຄືນຈາກເຮືອນທີ່ບໍ່ມີການເຝົ້າຍາມ; “ແລະພວກເຂົາຈະໜີບໍ່ພົ້ນເປັນແນ່.” (1 ເທສະໂລນີກ 5:3). *{GC 38.1}*

ຫຼາຍພັນຄົນລີ້ໄພຕາມຄອງອຸບມຸງອັນສະຫງັບຊັບຊ້ອນໃຕ້ເນີນພູນອກກຳແພງເມືອງ ຂອງນະຄອນໂຣມ. ກຸ່ມອຸບມຸງມືດເຫຼົ່ານີ້ມີລັກສະນະເປັນເຄືອຂ່າຍທີ່ຍາວຫຼາຍ ກິໂລແມັດ. ຜູ້ຕິດຕາມພຣະຄຣິສໄດ້ຝັງສົບຄົນຮັກຂອງພວກເຂົາໃນອຸບມຸງໃຕ້ດິນ ແລະ ເມື່ອຖືກສົ່ງໄສ ຫຼື ມີຄົນຕາມລ່າກໍໄດ້ອາໄສຢູ່ໃນອຸບມຸງເຫຼົ່ານີ້ເຊັ່ນກັນ.

ເບິ່ງໜ້າ 20.

Image generated with AI (Google Gemini).

2

ການຂົ່ມເຫັງໃນຍຸກທຳອິດ

ຊົງທຳນວາຍໄວ້

ໃນຂະນະທີ່ພຣະຜູ້ໂຜດໃຫ້ພົ້ນຊົງຢືນຢູ່ເທິງພູເຂົາໝາກກອກເທດ, ພຣະອົງຊົງເປີດເຜີຍໃຫ້ສາວົກຮູ້ເຖິງການທຳລາຍນະຄອນເຢຣູຊາເລັມ ແລະ ເຫດການທີ່ກ່ຽວຂ້ອງກັບການສະເດັດກັບມາຄັ້ງທີສອງຂອງພຣະອົງ. ພຣະອົງຊົງເປີດເຜີຍປະສົບການຂອງໄພ່ພົນຂອງພຣະອົງຕັ້ງແຕ່ເມື່ອພຣະອົງຈະຊົງຖືກຮັບໄປ ຈົນເຖິງເວລາທີ່ພຣະອົງຈະສະເດັດກັບມາດ້ວຍສະຫງ່າຣາສີເພື່ອກອບກູ້ເອົາພວກເຂົາ. ພຣະອົງເຫັນພະຍຸທີ່ກຳລັງຈະພັດຖະຫຼົ່ມໃສ່ຄຣິສຕະຈັກໃນຍຸກອັກຄະສາວົກ. ແລ້ວກໍເບິ່ງໄປເຖິງອະນາຄົດອັນໄກ ແລະ ເຫັນການກົດຂີ່ຂົ່ມເຫັງອັນໜັກໜ່ວງທີ່ຈະເກີດຂຶ້ນກັບຜູ້ຕິດຕາມພຣະອົງໃນຍຸກຕ່າງ ໆ ທີ່ມືດມົນຫຼັງຈາກນັ້ນ. ພຣະອົງຊົງກ່າວລ່ວງໜ້າດ້ວຍປະໂຫຍກສັ້ນ ໆ ເຖິງສິ່ງທີ່ບັນດາຜູ້ນຳຂອງໂລກຈະປະຕິບັດຕໍ່ຄຣິສຕະຈັກຂອງພຣະເຈົ້າ. (ເບິ່ງ ມັດທາຍ 24:9, 21, 22). ຜູ້ຕິດຕາມພຣະຄຣິສຈຳເປັນຕ້ອງດຳເນີນຊີວິດຕາມເສັ້ນທາງດຽວກັນກັບທີ່ພຣະອາຈານ ກໍຄືພຣະເຢຊູຄຣິສເຄີຍສະເດັດຜ່ານນັ້ນເອງ. ໃນເສັ້ນທາງນັ້ນຈະຕ້ອງປະເຊີນກັບຄວາມອັບອາຍ, ຄວາມທຸກຍາກລຳບາກ ແລະ ການຖືກຄົນໃນສັງຄົມດູຖູກຢຽດຢາມ. ຄວາມກຽດຊັງທີ່ຕົກໃສ່ພຣະຜູ້ໄຖ່ຂອງໂລກ ກໍຈະກະທົບຕໍ່ທຸກຄົນທີ່ເຊື່ອໃນພຣະນາມຂອງພຣະອົງເຊັ່ນກັນ. *{GC 39.1}*

ຖ້ອຍຄຳເຫຼົ່ານີ້ຂອງພຣະເຢຊູໄດ້ສຳເລັດໃນປະຫວັດສາດຂອງຄຣິສຕະຈັກໃນຍຸກທຳອິດ. ບັນດາອຳນາດຂອງມະນຸດ ແລະ ຝີມານຊາຕານຕັ້ງຕົວຕໍ່ສູ້ພຣະຄຣິສຜ່ານຜູ້ຕິດຕາມຂອງພຣະອົງ. ຄົນທີ່ຖືຕາມລັດທິນອກສາສະໜາກໍເຫັນວ່າຖ້າຄົນທັງຫຼາຍມາຮັບເອົາຂ່າວປະເສີດແລ້ວ ບັນດາວິຫານ ແລະ ແທ່ນບູຊາຂອງຕົນຈະຖືກທຳລາຍລົງ. ສະນັ້ນ, ຄົນເຫຼົ່ານີ້ຈຶ່ງຮວມກຳລັງເພື່ອໃຫ້ຄຣິສຕະສາສະໜາໝົດໄປຈາກໂລກ ແລະ ມີການກົດຂີ່ຂົ່ມເຫັງຢ່າງດຸເດືອດເກີດຂຶ້ນ. ພວກຄຣິສຕຽນຖືກຢຶດຊັບສິນ ແລະ ຖືກຂັບໄລ່ອອກຈາກເຮືອນຊານບ້ານຊ່ອງຂອງຕົນເອງ. ພວກເຂົາຕ້ອງ “ອົດທົນຕໍ່ຄວາມຍາກລຳບາກຫຼາຍປະການ” ແລະ “ຖືກຫຍໍ້ຫຍັນ ແລະ ຖືກຂ້ຽນຕີ ຄົນອື່ນອີກຖືກລ່ຳມໂສ້ ແລະ ຖືກຄຸມຂັງໃນຄຸກ.” (ເຮັບເຣີ 10:32; 11:36). ມີຄົນຈຳນວນຫຼວງຫຼາຍຢືນຢັນເຖິງຄຳພະຍານຂອງຕົນດ້ວຍເລືອດຂອງຕົນເອງເມື່ອຖືກຂ້າຕາຍ. ຄົນຊົນຊັ້ນຕ່າງ ໆ ຕັ້ງແຕ່ລະດັບຂຸນນາງຮອດຂ້າທາດ, ຄົນຮັ່ງມີ ແລະ ຜູ້ທຸກຍາກ, ທັງປັນຍາຊົນຜູ້ຮຽນສູງຕະຫຼອດຈົນເຖິງຄົນບໍ່ຮູ້ໜັງສື ຕ່າງກໍຖືກຂ້າຟັນຕາຍໂດຍບໍ່ຮູ້ປານີ. *{GC 39.2}*

ເຕີບໂຕຍ້ອນຖືກຂົ່ມເຫັງ

ການກົດຂີ່ຂົ່ມເຫັງນີ້ເລີ່ມຕົ້ນໃນສະໄໝການປົກຄອງຂອງຈັກກະພັດເນໂຣ (Nero) ໃນຊ່ວງເວລາ ທີ່ອາຈານໂປໂລຖືກຂ້າຕາຍຍ້ອນຄວາມເຊື່ອ ແລະ ສືບຕໍ່ເນື່ອງກັນມາຫຼາຍສະຕະວັດ ໂດຍມີບາງ ຊ່ວງທີ່ເບົາບາງ ແລະ ບາງຊ່ວງທີ່ດຸເດືອດ. ພວກຄຣິສຕຽນຖືກໃສ່ຮ້າຍວ່າເຮັດຜິດອາດຊະຍາກຳ ຮ້າຍແຮງ ແລະ ເປັນເຫດທີ່ເກີດໄພພິບັດຕ່າງ ໆ ບໍ່ວ່າຈະເປັນການກັນດານອາຫານ, ໂຣກລະບາດ ຫຼື ແຜ່ນດິນໄຫວ. ພວກເຂົາກາຍເປັນທີ່ກຽດຊັງຂອງສັງຄົມ ແລະ ເປັນທີ່ສົງໄສຂອງຄົນສ່ວນໃຫຍ່. ໃນ ສະພາບການເຊັ່ນນີ້ ມີຄົນພ້ອມທີ່ຈະຮັບສິນບົນເພື່ອໃສ່ຮ້າຍຄົນທີ່ບໍ່ມີຄວາມຜິດ. ພວກຄຣິສຕຽນຈຶ່ງຖືກ ລົງໂທດໃນຂໍ້ຫາເປັນກະບົດຕໍ່ຈັກກະພັດ, ເປັນພວກຕໍ່ຕ້ານສາສະໜາ ແລະ ເປັນໄພຕໍ່ສັງຄົມ. ມີຄົນ ຈຳນວນຫຼາຍຖືກໂຍນໃຫ້ສັດປ່າກັດກິນຕາມໂຮງລະຄອນ ຫຼື ຖືກເຜົາທັງເປັນເພື່ອສ້າງຄວາມບັນເທີງ. ບາງຄົນຖືກຄຶງໄວ້ທີ່ໄມ້ກາງແຂນ, ສ່ວນຄົນອື່ນກໍຖືກຫຍິບໃສ່ໜັງສັດ ແລ້ວຖືກໂຍນໄປໃນສະໜາມ ກິລາໃຫ້ໝາກັດກິນ. ຫຼາຍຄັ້ງການລົງໂທດພວກຄຣິສຕຽນກາຍເປັນເລື່ອງທີ່ສະໜຸກສະໜານທີ່ສຸດໃນ ລະຫວ່າງເທດສະການຕ່າງ ໆ. ຄົນຈຳນວນຫຼວງຫຼາຍຮວມຕົວກັນເພື່ອເບິ່ງຄຣິສຕຽນຖືກຂ້າ ແລະ ເມື່ອ ພວກເຂົາຮ້ອງໂອຍຄາງກ່ອນສິ້ນໃຈຕາຍ ຄົນທັງຫຼາຍກໍຕົບມືຫົວຂວັນ. *{GC 40.1}*

ບໍ່ວ່າຜູ້ຕິດຕາມພຣະຄຣິສຈະໄປລີ້ຢູ່ໃສ ກໍຖືກຄົນໄລ່ລ່າເໝືອນສັດຮ້າຍໄລ່ເຫຍື່ອ. ພວກເຂົາຈຳເປັນ ຕ້ອງໄປຫຼົບລີ້ຢູ່ບ່ອນສອກຫຼີກ ແລະ ເປົ່າປ່ຽວ. ພວກເຂົາ “ລຳບາກຍາກຈົນ, ຖືກຂົ່ມເຫັງ ແລະ ທົນ ທຸກເວດທະນາຫຼາຍປະການ ແຜ່ນດິນໂລກນີ້ກໍບໍ່ສົມກັບຄົນເຫຼົ່ານັ້ນ, ພວກເພິ່ນໄດ້ທ່ຽວໄປມາໃນ ປ່າ ແລະ ຕາມພູ ຊ່ອນຕົວໃນຖ້ຳ ແລະ ໃນຂຸມ.” (ເຮັບເຣີ 11:37, 38). ຫຼາຍພັນຄົນລີ້ໄພຕາມ ຄອງອຸບມຸງອັນສະຫຼັບຊັບຊ້ອນໃຕ້ເນີນພູນອກກຳແພງເມືອງຂອງນະຄອນໂຣມ. ກຸ່ມອຸບມຸງມືດເຫຼົ່ານີ້ມີ ລັກສະນະເປັນເຄືອຂ່າຍທີ່ຍາວຫຼາຍກິໂລແມັດ. ຜູ້ຕິດຕາມພຣະຄຣິສໄດ້ຝັງສົບຄົນຮັກຂອງພວກເຂົາໃນ ອຸບມຸງໃຕ້ດິນ ແລະ ເມື່ອຖືກສົງໄສ ຫຼື ມີຄົນຕາມລ່າກໍໄດ້ອາໄສຢູ່ໃນອຸບມຸງເຫຼົ່ານີ້ເຊັ່ນກັນ. ເມື່ອ ພຣະຄຣິສຊົງຄືນຊີວິດໃຫ້ຄົນທັງຫຼາຍທີ່ຕໍ່ສູ້ເພື່ອພຣະອົງຢ່າງສຸດກຳລັງ ຈະມີຫຼາຍຄົນຟື້ນຂຶ້ນຈາກອຸບມຸງ ອັນມືດມົນເຫຼົ່ານັ້ນ ທີ່ເຄີຍຖືກຂ້າຕາຍຍ້ອນຄວາມເຊື່ອທີ່ມີໃນພຣະອົງ. *{GC 40.2}*

ເຖິງແມ່ນວ່າຄົນທີ່ເປັນພະຍານເພື່ອພຣະເຢຊູຖືກກົດຂີ່ຂົ່ມເຫັງຢ່າງໜັກໜ່ວງ ແຕ່ຄວາມເຊື່ອຂອງ ພວກເຂົາຍັງເຂັ້ມແຂງຄືເກົ່າ. ພວກເຂົາບໍ່ຈົ່ມຫຍັງເລີຍ ເຖິງແມ່ນວ່າຈະຖືກກີດກັ້ນຈາກສິ່ງອຳນວຍ ຄວາມສະດວກທຸກຢ່າງ, ຕ້ອງຫຼົບຊ່ອນໃຕ້ພື້ນແສງຕາເວັນ ແລະ ພັກອາໄສໃນອ້ອມກອດມືດອັນ ອົບອຸ່ນຂອງແຜ່ນດິນ. ພວກເຂົາໃຫ້ກຳລັງໃຈເຊິ່ງກັນແລະກັນດ້ວຍຖ້ອຍຄຳແຫ່ງຄວາມເຊື່ອ, ຄວາມ ອົດທົນ ແລະ ຄວາມຫວັງ ເພື່ອຈະທົນຕໍ່ຄວາມຂາດແຄນ ແລະ ຄວາມທຸກຍາກ. ເຖິງແມ່ນວ່າ ຕ້ອງສູນເສຍຜົນປະໂຫຍດຝ່າຍໂລກທຸກຢ່າງ, ແຕ່ກໍບໍ່ສາມາດບັງຄັບພວກເຂົາໃຫ້ສະຫຼະຄວາມເຊື່ອໃນ ພຣະຄຣິສ. ຄວາມຍາກລຳບາກ ແລະ ການກົດຂີ່ຂົ່ມເຫັງເປັນພຽງຂັ້ນໄດທີ່ໄປສູ່ບ່ຳເໝັດລາງວັນ ແລະ ການພັກຜ່ອນໃຫ້ໄວຂຶ້ນ. *{GC 41.1}*

ເໝືອນຜູ້ຮັບໃຊ້ຂອງພຣະເຈົ້າໃນສະໄໝບູຮານ, ມີຫຼາຍຄົນ “ຖືກທໍລະມານ ແຕ່ກໍບໍ່ຍອມຮັບການ ປົດປ່ອຍ ເພື່ອພວກເພິ່ນຈະໄດ້ຮັບການຄືນມາອັນປະເສີດກວ່າ.” (ເຮັບເຣີ 11:35). ຄົນເຫຼົ່ານີ້ລະນຶກເຖິງ ຖ້ອຍຄຳຂອງອົງພຣະຜູ້ເປັນເຈົ້າທີ່ຊົງກ່າວວ່າ, ຖ້າຖືກຂົ່ມເຫັງຍ້ອນພຣະນາມຂອງພຣະຄຣິສແລ້ວ ໃຫ້ ຊົມຊື່ນຍິນດີເພາະບຳເໝັດຂອງພວກເຂົາຈະຍິ່ງໃຫຍ່ໃນສະຫວັນ, ເພາະວ່າພວກຜູ້ເຜີຍພຣະທຳເຄີຍຖືກ ກົດຂີ່ຂົ່ມເຫັງກ່ອນໜ້າພວກເຂົາເຊັ່ນກັນ. ຄົນເຫຼົ່ານີ້ຊົມຊື່ນຍິນດີທີ່ໄດ້ຮັບກຽດໃນການທົນທຸກເພື່ອຄວາມ ຈິງ ຈຶ່ງຮ້ອງເພງອັນມີໄຊຈາກທ່າມກາງກອງໄຟທີ່ກ່ຳຂຶ້ນເພື່ອເຜົາພວກເຂົາທັງເປັນ. ພວກເຂົາເງີຍໜ້າ

ຂຶ້ນດ້ວຍຄວາມເຊື່ອ ແລະ ເຫັນພຣະຄຣິສກັບເຫຼົ່າທູດສະຫວັນເບິ່ງລົງມາຈາກສະຫວັນດ້ວຍຄວາມສົນໃຈ ແລະ ຄວາມພໍໃຈໃນຄວາມອົດທົນຂອງພວກຕົນ. ມີສຽງດັງຈາກບັນລັງຂອງພຣະເຈົ້າມາເຖິງພວກເຂົາວ່າ: "ເຈົ້າຈົ່ງມີໃຈສັດຊື່ສຸດຈະຣິດຈົນເຖິງວັນຕາຍ ແລ້ວເຮົາຈະເອົາມົງກຸດແຫ່ງຊີວິດໃຫ້ແກ່ເຈົ້າ." (ພຣະນິມິດ 2:10). *{GC 41.2}*

ຄວາມພະຍາຍາມຂອງຊາຕານທີ່ຈະທຳລາຍກຸ່ມຄົນທີ່ເຊື່ອໃນພຣະຄຣິສດ້ວຍຄວາມຮຸນແຮງກໍບໍ່ໄດ້ຜົນ. ການຕໍ່ສູ້ລະຫວ່າງຄວາມສະຫວ່າງ ແລະ ຄວາມມືດບໍ່ໄດ້ຢຸຕິລົງຫຼັງຈາກຜູ້ທີ່ຖືທຸງໄຊຂອງພຣະເຢຊູຢ່າງສັດຊື່ລົ້ມຕາຍຄາສະໜາມຮົບ. ພວກສາວົກເຫຼົ່ານັ້ນຊະນະດ້ວຍການຕາຍ ແລະ ເຖິງແມ່ນວ່າຜູ້ຮັບໃຊ້ຂອງພຣະເຈົ້າຖືກຂ້າຟັນ ແຕ່ວຽກງານຂອງພຣະເຈົ້າກໍສືບຕໍ່ໄປຂ້າງໜ້າ, ການປະກາດຂ່າວປະເສີດຂະຫຍາຍວົງກວ້າງອອກໄປ ແລະ ຄົນທີ່ເຊື່ອຖືກໍເພີ່ມຂຶ້ນ. ຂ່າວປະເສີດຍັງຖືກປະກາດໃນບ່ອນທີ່ທະຫານໂຣມຍັງບໍ່ສາມາດເຂົ້າເຖິງໄດ້. ມີຄຣິສຕຽນຄົນໜຶ່ງຕອບໂຕ້ພວກຜູ້ນຳນອກສາສະໜາທີ່ຊຸກຍູ້ໃຫ້ສືບຕໍ່ການກົດຂີ່ຂົ່ມເຫັງວ່າ, ພວກເຈົ້າສາມາດ "ຂ້າພວກເຮົາຖິ້ມ, ສາມາດເອົາພວກເຮົາໄປທໍລະມານ ຫຼື ລົງໂທດພວກເຮົາ, . . . ແຕ່ຄວາມບໍ່ຍຸຕິທຳຂອງພວກເຈົ້າເປັນຫຼັກຖານວ່າເຮົາບໍ່ມີຄວາມຜິດ . . . ແລະຄວາມໂຫດຮ້າຍຂອງພວກເຈົ້າ . . . ກໍບໍ່ເປັນຜົນດີໃຫ້ແກ່ພວກເຈົ້າເອງ." ຊ້ຳບໍ່ໜຳ, ການຂົ່ມເຫັງເປັນເຫດໃຫ້ຄົນກັບໃຈເຊື່ອຫຼາຍຂຶ້ນ. "ພວກເຮົາຖືກຂ້າຟັນຫຼາຍສ່ຳໃດ ກໍຍິ່ງເພີ່ມຂຶ້ນຫຼາຍສ່ຳນັ້ນ ເພາະວ່າເລືອດຂອງຄຣິສຕຽນເໝືອນດັ່ງເມັດພືດ."[1] *{GC 41.3}*

ເຖິງແມ່ນວ່າມີຫຼາຍພັນຄົນຖືກຂ້າຕາຍ ຫຼື ຖືກຈຳຄຸກ ແຕ່ກໍມີຄົນອື່ນມາແທນທີ່ພວກເຂົາ. ສ່ວນຄົນທີ່ຖືກຂ້າຕາຍຍ້ອນຄວາມເຊື່ອກໍປອດໄພຢູ່ໃນພຣະຄຣິສ, ພຣະອົງຊົງຖືວ່າຄົນເຫຼົ່ານັ້ນເປັນຜູ້ທີ່ໄດ້ຮັບໄຊຊະນະ. ພວກເຂົາໄດ້ຕໍ່ສູ້ຈົນເຕັມກຳລັງ ແລະ ຈະໄດ້ຮັບມົງກຸດແຫ່ງສະຫງ່າຣາສີເມື່ອພຣະຄຣິສສະເດັດກັບມາ. ຄວາມທຸກທໍ້ຫຼາຍທີ່ຕ້ອງສູ້ທົນນັ້ນເຮັດໃຫ້ພວກຄຣິສຕຽນມີຄວາມໃກ້ຊິດກັນຂຶ້ນ ແລະ ຄວາມແໜ້ນແຟ້ນກັບພຣະຜູ້ໃຫ່ຂອງພວກເຂົາຍິ່ງຫຼາຍຂຶ້ນກວ່າເກົ່າ. ຊີວິດຂອງພວກເຂົາເປັນດັ່ງຄຳພະຍານເພື່ອຄວາມຈິງຢູ່ຕະຫຼອດເວລາ ແລະ ພວກເຂົາກໍກ່າວຄຳພະຍານນັ້ນອີກໃນຂະນະທີ່ກຳລັງສິ້ນໃຈ. ໃນບ່ອນທີ່ບໍ່ຄາດຄິດກໍມີຄົນປະລະຈາກການຮັບໃຊ້ຊາຕານ ມາຂໍຮັບໃຊ້ພາຍໃຕ້ທົ່ມທຸງຂອງພຣະຄຣິສ. *{GC 42.1}*

ຊາຕານວາງອຸບາຍ

ຊາຕານຈຶ່ງວາງແຜນຍຸດທະສາດຂອງມັນເພື່ອທຳລາຍການປົກຄອງຂອງພຣະເຈົ້າດ້ວຍການປັກທຸງຂອງມັນເອງໄວ້ໃນຄຣິສຕະຈັກ. ຖ້າມັນສາມາດຫຼອກໃຫ້ຜູ້ຕິດຕາມພຣະຄຣິສຫຼົງເຮັດໃນສິ່ງທີ່ພຣະເຈົ້າບໍ່ພໍພຣະໄທ, ຄວາມເຂັ້ມແຂງ ແລະ ຄວາມໜັກແໜ້ນໝັ້ນຄົງຂອງພວກເຂົາກໍຈະໝົດໄປ ແລະ ຈະຕົກເປັນເຫຍື່ອຢ່າງງ່າຍດາຍ. *{GC 42.2}*

ໃນເມື່ອການໃຊ້ກຳລັງບໍ່ໄດ້ຜົນ, ຊາຕານຜູ້ເປັນສັດຕູຂອງພຣະເຈົ້າ ແລະ ມະນຸດຈຶ່ງລອງຫັນມາໃຊ້ວິທີທີ່ແນບນຽນ. ການກົດຂີ່ກໍຍຸຕິລົງ ແຕ່ມີສິ່ງທີ່ອັນຕະລາຍໄປກວ່ານັ້ນມາແທນທີ່ ຄືການລໍ້ໃຈໃຫ້ຫວັງໃນຄວາມຈະເລີນ ແລະ ກຽດຕິຍົດຝ່າຍໂລກ. ຄົນທີ່ຖືຮູບເຄົາລົບເປັນພຣະເຈົ້າກໍຮັບເຊື່ອຕາມຫຼັກການຄຣິສຕຽນສ່ວນໜຶ່ງ ໃນຂະນະທີ່ພວກເຂົາປະຕິເສດຫຼັກຄວາມຈິງທີ່ສຳຄັນຂໍ້ອື່ນ. ພວກເຂົາອ້າງວ່າຍອມຮັບພຣະເຢຊູໃນຖານະພຣະບຸດຂອງພຣະເຈົ້າ ທັງເຊື່ອໃນການສິ້ນພຣະຊົນ ແລະ ການຟື້ນຄືນຊີບຂອງພຣະອົງ ແຕ່ໃນຂະນະດຽວກັນກໍບໍ່ສຳນຶກໃນຄວາມບາບຂອງຕົນ ແລະ ບໍ່ຮູ້ສຶກວ່າຕ້ອງ

[1] *ບົດຖະແຫຼງຂອງເທີທູລຽນ* (Tertullian's Apology), ວັກ 50.

ຖິ້ມໃຈເກົ່າເອົາໃຈໃໝ່. ຄົນເຫຼົ່ານີ້ອ້າງວ່າໃນເມື່ອພວກເຂົາຍອມປ່ຽນແປງ, ພວກຄຣິສຕຽນກໍຄວນປ່ຽນແປງເຊັ່ນກັນ ເພື່ອທຸກຄົນຈະຮວມກັນເປັນໜຶ່ງໃນຄວາມເຊື່ອໃນພຣະຄຣິສ. {GC 42.3}

ບັດນີ້ຄຣິສຕະຈັກເຂົ້າສູ່ໄພອັນຕະລາຍອັນໜ້າຢ້ານ. ການຂ້ຽນຄຸກ, ການທໍລະມານ, ການຖືກໄຟເຜົາ ແລະ ການຖືກປະຫັດປະຫານດ້ວຍດາບລ້ວນແລ້ວແຕ່ເປັນພຣະພອນ ເມື່ອທຽບກັບໄພອັນໜ້າຢ້ານກົວທີ່ເຂົ້າມາ. ມີຄຣິສຕຽນບາງຄົນຕັ້ງໝັ້ນຢູ່ຢ່າງບໍ່ຫວັ່ນໄຫວ ແລະ ປະກາດວ່າຈະບໍ່ສາມາດປະນີປະນອມເປັນອັນຂາດ. ສ່ວນຄົນອື່ນກໍເຫັນດີທີ່ຈະປ່ຽນແປງ ຫຼື ແກ້ໄຂຫຼັກຂໍ້ເຊື່ອບາງຂໍ້ເພື່ອຮວມເປັນໜຶ່ງກັບຄົນທີ່ຮັບເຊື່ອພຽງບາງສ່ວນ ໂດຍກ່າວວ່າຈະນຳໄປສູ່ການກັບໃຈໃໝ່ຢ່າງແທ້ຈິງຂອງພວກເຂົາ. ນັ້ນເປັນເວລາທີ່ທຸກໃຈຫຼາຍທີ່ສຸດສຳລັບພວກສາວົກຂອງພຣະຄຣິສ. ຊາຕານພາງຕົວເອງເປັນຄຣິສຕຽນເພື່ອເຂົ້າມາໃນຄຣິສຕະຈັກ ໂດຍມຸ່ງຫວັງຈະທຳລາຍຄວາມເຊື່ອໃຫ້ເສື່ອມເສຍ ແລະ ຫັນຈິດໃຈຂອງສະມາຊິກໃຫ້ອອກຈາກການຖ້ອຍຄຳແຫ່ງຄວາມຈິງ. {GC 42.4}

ໃນທີ່ສຸດຄຣິສຕຽນສ່ວນຫຼາຍກໍຍອມທີ່ຈະລົດມາດຕະຖານລົງ ຈຶ່ງເກີດການຮວມເປັນໜຶ່ງດຽວລະຫວ່າງສາສະໜາຄຣິສ ແລະ ລັດທິນອກສາສະໜາ. ເຖິງແມ່ນວ່າຄົນທີ່ຂາບໄຫວ້ຮູບເຄົາລົບຈະອ້າງວ່າຕົນກັບໃຈເຊື່ອພຣະເຢຊູແລ້ວ ແລະ ເຂົ້າມາຮ່ວມໃນຄຣິສຕະຈັກແລ້ວກໍຕາມ, ແຕ່ພວກເຂົາຍັງຍຶດຖືການຂາບໄຫວ້ຮູບເຄົາລົບຢູ່, ນັ້ນໝາຍຄວາມວ່າພວກເຂົາປ່ຽນແຕ່ຮູບ ໂດຍການເອົາຮູບເກົ່າຖິ້ມ ແລະ ເອົາຮູບພຣະເຢຊູ, ຮູບນາງມາຣີ ຫຼື ຮູບພວກນັກບຸນມາຂາບໄຫວ້ແທນ. ການຂາບໄຫວ້ຮູບເຄົາລົບເປັນດັ່ງເຊື້ອແປ້ງອັນບູດເນົ່າທີ່ເຂົ້າມາສ້າງຄວາມເສຍຫາຍໃນຄຣິສຕະຈັກຢ່າງຕໍ່ເນື່ອງ. ຫຼັກຄຳສອນທີ່ຜິດພ້ຽນ, ພິທີກຳທີ່ງົມງວາຍ ແລະ ປະເພນີທີ່ກ່ຽວຂ້ອງກັບການນັບຮູບເຄົາລົບໄດ້ເຂົ້າມາປະສົມປະສານກັບຄວາມເຊື່ອຖື ແລະ ການນະມັດສະການພຣະເຈົ້າ. ການທີ່ສາວົກຂອງພຣະຄຣິສຮ່ວມມືກັນເປັນໜຶ່ງດຽວກັບຄົນທີ່ຂາບໄຫວ້ຮູບເຄົາລົບ ສ້າງຄວາມເສຍຫາຍໃຫ້ກັບສາສະໜາຄຣິສ, ພ້ອມກັບເຮັດໃຫ້ຄຣິສຕະຈັກສູນເສຍຄວາມບໍຣິສຸດ ແລະ ພະລັງຣິດເດດຂອງພຣະເຈົ້າ. ແຕ່ກໍຍັງມີບາງຄົນທີ່ບໍ່ໄດ້ຫຼົງໄປຕາມການຫຼອກລວງນີ້. ພວກເຂົາຍັງຄົງສັດຊື່ຕໍ່ພຣະຜູ້ເປັນເຈົ້າແຫ່ງຄວາມຈິງ ແລະ ນະມັດສະການພຣະອົງແຕ່ຜູ້ດຽວ. {GC 43.1}

ຄົນສອງກຸ່ມ

ຕັ້ງແຕ່ໃດມາ, ມີຄົນສອງກຸ່ມທີ່ອ້າງວ່າເປັນສາວົກຂອງພຣະຄຣິສ. ຄົນກຸ່ມໜຶ່ງສຶກສາຊີວິດຂອງພຣະຜູ້ຊ່ວຍໃຫ້ລອດ ແລະ ພະຍາຍາມປັບປຸງຊີວິດ ແລະ ແກ້ໄຂຈຸດອ່ອນຂອງຕົນຕາມແບບຢ່າງຂອງພຣະອົງ. ສ່ວນອີກກຸ່ມໜຶ່ງກໍຫຼີກລ່ຽງຄຳສອນທີ່ກົ້ງໄປກົ້ງມາ ເພາະຢ້ານວ່າຈະເປີດເຜີຍໃຫ້ເຫັນຂໍ້ບົກຜ່ອງຂອງຕົນເອງ. ແມ່ນແຕ່ໃນສະໄໝທີ່ຄຣິສຕະຈັກຢູ່ໃນສະພາບທີ່ດີທີ່ສຸດ ກໍຍັງມີສະມາຊິກບາງຄົນທີ່ບໍ່ບໍຣິສຸດ ແລະ ບໍ່ຈິງໃຈ. ພຣະຜູ້ຊ່ວຍໃຫ້ລອດຂອງເຮົາສອນວ່າ ບໍ່ໃຫ້ຮັບຜູ້ທີ່ຈົງໃຈເຮັດບາບມາເປັນສະມາຊິກຂອງຄຣິສຕະຈັກ. ໃນຂະນະດຽວກັນພຣະອົງເອງກໍມີຄວາມສຳພັນກັບຄົນທີ່ມີນິໄສທີ່ບໍ່ສົມບູນ ທັງໃຫ້ພວກເຂົາໄດ້ຮັບປະໂຫຍດຈາກຄຳສອນ ແລະ ແບບຢ່າງຂອງພຣະອົງ ເພື່ອຄົນເຫຼົ່ານັ້ນຈະໄດ້ເຫັນຈຸດບົກຜ່ອງຂອງຕົນແລ້ວປັບປຸງແກ້ໄຂ. ໃນທ່າມກາງອັກຄະສາວົກສິບສອງຄົນກໍຍັງມີຜູ້ທໍລະຍົດ. ພຣະເຢຊູຊົງຮັບຢູດາເຂົ້າມາເປັນໜຶ່ງໃນພວກສາວົກ ບໍ່ແມ່ນຍ້ອນວ່າລາວມີອຸປະນິໄສທີ່ບໍ່ສົມບູນ, ແຕ່ເຖິງວ່າອຸປະນິໄສນັ້ນບໍ່ສົມບູນກໍຕາມ ພຣະອົງກໍຍັງຊົງເລືອກລາວ ເພື່ອຈະໄດ້ຮັບການສັ່ງສອນ ແລະ ເຫັນແບບຢ່າງໃນການດຳເນີນຊີວິດຂອງພຣະອົງ ເພື່ອວ່າລາວຈະໄດ້ຮຽນຮູ້ເຖິງມາດຕະຖານອຸປະນິໄສຂອງຄຣິສຕຽນ. ພຣະເຢຊູຫວັງວ່າລາວຈະເຫັນຈຸດ

ບົກຜ່ອງຂອງຕົນແລ້ວຖິ້ມໃຈເກົ່າເອົາໃຈໃໝ່ ແລະ ດ້ວຍພຣະຄຸນຂອງພຣະເຈົ້າຈະສາມາດຊຳລະໃຈ ໃຫ້ບໍຣິສຸດໂດຍການ “ເຊື່ອຟັງຄວາມຈິງ.” (1 ເປໂຕ 1:22). ຝ່າຍຢູດາບໍ່ໄດ້ດຳເນີນຊີວິດໃນແສງ ສະຫວ່າງທີ່ພຣະອົງຊົງໂຜດໃຫ້ສ່ອງມາຍັງລາວ ແຕ່ກັບປ່ອຍຕົວເຮັດບາບ ແລະ ຍອມປ່ອຍໃຈໃຫ້ ຄ້ອຍຕາມອຳນາດມືດ ຈຶ່ງເປັນການເຊີນຊວນໃຫ້ຊາຕານເຂົ້າມາທົດລອງ. ຄວາມຊົ່ວໃນໃຈຈຶ່ງຄອບງຳ ຄວາມຄິດ ແລະ ອຳນາດມືດຈຶ່ງຄອບຄອງຈິດໃຈ. ລາວຂຸ່ນເຄືອງໃຈເມື່ອມີຄົນເຕືອນລາວເຖິງຄວາມ ບົກຜ່ອງຂອງຕົນ; ສຸດທ້າຍຄວາມຊົ່ວກໍຂະຫຍາຍໂຕຂຶ້ນ ຈົນລາວລົງມືເຮັດອາດຊະຍາກຳອັນຮ້າຍແຮງ ດ້ວຍການທໍລະຍົດຕໍ່ພຣະອາຈານ. ເຊັ່ນດຽວກັນ, ທຸກຄົນທີ່ຖະໜອມຄວາມຊົ່ວໃນຂະນະທີ່ອ້າງວ່າ ຕົນເປັນຄົນຊອບທຳຈະກຽດຊັງຜູ້ທີ່ເຕືອນສະຕິວ່າສິ່ງທີ່ລາວກຳລັງເຮັດຢູ່ນັ້ນແມ່ນຄວາມບາບ. ເມື່ອ ມີໂອກາດເໝາະສົມ, ພວກເຂົາກໍຈະເຮັດຄືຢູດາ ແລະ ທໍລະຍົດຕໍ່ຜູ້ທີ່ຕັກເຕືອນດ້ວຍຄວາມຫວັງ ດີ. *{GC 43.2}*

ພວກອັກຄະສາວົກພົບເຫັນຜູ້ຄົນໃນຄຣິສຕະຈັກທີ່ອ້າງວ່າຕົນເປັນຄົນຊອບທຳ ໃນຂະນະທີ່ລັກເຮັດ ບາບຢ່າງລັບໆ. ອານາເນຍ ແລະ ຊະຟີຣາ[2] ເປັນຜູ້ຫຼອກລວງ; ພວກເຂົາທຳທ່າໄດ້ມອບທຸກສິ່ງທຸກ ຢ່າງແດ່ພຣະເຈົ້າ ແຕ່ໃນເວລາດຽວກັນໄດ້ເກັບສ່ວນໜຶ່ງໄວ້ສຳລັບຕົນເອງດ້ວຍຄວາມໂລບ. ພຣະວິນຍານ ແຫ່ງຄວາມຈິງໄດ້ເປີດເຜີຍທາດແທ້ຂອງຜູ້ຫຼອກລວງຄູ່ນີ້ໃຫ້ພວກອັກຄະສາວົກໄດ້ຮັບຮູ້, ແລ້ວພຣະເຈົ້າ ຊົງລົງໂທດອານາເນຍ ແລະ ຊະຟີຣາ ເພື່ອຊຳລະຄຣິສຕະຈັກໃຫ້ບໍຣິສຸດຈາກຄວາມດ່າງພອຍດັ່ງກ່າວ. ເລື່ອງນີ້ເປັນຫຼັກຖານອັນເດັ່ນຊັດວ່າ ພຣະວິນຍານຂອງພຣະຄຣິສທີ່ຊົງເຄື່ອນໄຫວໃນຄຣິສຕະຈັກ ຊົງຢັ່ງຮູ້ ຈິດໃຈຂອງຄົນ ເຮັດໃຫ້ພວກມືຖືສາກປາກຖືສີນ ແລະ ພວກທີ່ເຮັດການຊົ່ວເກີດຄວາມສະທ້ານຢ້ານກົວ. ພວກເຂົາທົນບໍ່ໄຫວທີ່ຈະຢູ່ກັບຜູ້ທີ່ມີອຸປະນິໄສທີ່ໝັ້ນຄົງຕາມແບບຢ່າງຂອງພຣະຄຣິສ. ດ້ວຍວ່າ, ມີແຕ່ ຄົນທີ່ຍອມສະຫຼະທຸກສິ່ງເພື່ອຄວາມຈິງເທົ່ານັ້ນ ທີ່ປາຖະໜາຢາກເປັນສາວົກຂອງພຣະຄຣິສໃນສະໄໝ ທີ່ຄົນຂອງພຣະອົງຕົກຢູ່ໃນຄວາມຍາກລຳບາກ ຫຼື ປະເຊີນກັບການກົດຂີ່ຂົ່ມເຫັງ. ສະນັ້ນ, ຕາບໃດທີ່ ການກົດຂີ່ຂົ່ມເຫັງຍັງສືບຕໍ່ ຄຣິສຕະຈັກກໍຍັງຄົງສະອາດບໍຣິສຸດພໍສົມຄວນ. ແຕ່ເມື່ອການຂົ່ມເຫັງສິ້ນສຸດ ລົງ ຜູ້ທີ່ມີຄວາມຈິງໃຈ ແລະ ການອຸທິດຕົນໜ້ອຍກວ່າກຸ່ມຜູ້ເຊື່ອເດີມໄດ້ເຂົ້າມາໃນຄຣິສຕະຈັກ ຈຶ່ງເປັນ ການປູທາງໃຫ້ຊາຕານໄດ້ໂອກາດເຂົ້າມາດ້ວຍ. *{GC 44.1}*

ແຕ່ເຈົ້າແຫ່ງຄວາມສະຫວ່າງກັບເຈົ້າແຫ່ງຄວາມມືດບໍ່ມີຫຸ້ນສ່ວນກັນ ສ່ວນຜູ້ຕິດຕາມທັງສອງ ຝ່າຍກໍເຊັ່ນດຽວກັນ. ເມື່ອພວກຄຣິສຕຽນຍອມຮ່ວມເປັນໜຶ່ງດຽວກັບຜູ້ທີ່ຮັບເຊື່ອໃນພຣະຄຣິສແຕ່ບໍ່ຍອມ ປະຖິ້ມຄວາມເຊື່ອເດີມເສຍ ກໍຍິ່ງເປັນການກ້າວລົງໄປສູ່ເສັ້ນທາງທີ່ນຳພວກເຂົາອອກຫ່າງຈາກຄວາມ ຈິງຢູ່ເລື້ອຍໆ. ຊາຕານແສນດີໃຈທີ່ສາມາດຫຼອກລວງສາວົກຂອງພຣະຄຣິສເປັນຈຳນວນຫຼວງຫຼາຍຈົນ ສຳເລັດ, ມັນຈຶ່ງໃຊ້ອຳນາດຄອບງຳຄົນເຫຼົ່ານີ້ໜັກຂຶ້ນກວ່າເກົ່າ ເພື່ອດົນໃຈໃຫ້ພວກເຂົາຂົ່ມເຫັງຜູ້ທີ່ ຍັງຄົງສັດຊື່ຕໍ່ພຣະເຈົ້າ. ບໍ່ມີຜູ້ໃດຮູ້ວິທີຕໍ່ຕ້ານຫຼັກຄຳສອນອັນແທ້ຈິງຂອງສາສະໜາຄຣິສ ເທົ່າກັບພວກ ທີ່ເຄີຍປົກປ້ອງຂໍ້ຄວາມຈິງເຫຼົ່ານັ້ນ. ພວກຄຣິສຕຽນທີ່ຫຼົງຜິດກໍໄດ້ຮ່ວມມືກັບຄົນທີ່ເອົາພຣະເຈົ້າແດ່ ເອົາ ສາສະໜາເດີມແດ່ ແລ້ວມຸ່ງໂຈມຕີຈຸດສຳຄັນທີ່ສຸດໃນຫຼັກຄຳສອນຂອງພຣະຄຣິສ. *{GC 45.1}*

ຄວາມຂັດແຍ້ງ

ການຫຼອກລວງ ແລະ ຄວາມຊົ່ວຊ້າປອມຕົວເຂົ້າມາໃນຄຣິສຕະຈັກພາຍໃຕ້ເສື້ອຄຸມຂອງບາດຫຼວງ ຈົນຜູ້ສັດຊື່ຕ້ອງອາໄສຄວາມອຸດສາຫະພາກພຽນເຖິງຈະຕ້ານໄວ້ໄດ້. ຄົນສ່ວນໃຫຍ່ບໍ່ຍອມຮັບເອົາພຣະ-ຄຳພີເປັນມາດຕະຖານຂອງຄວາມເຊື່ອ ແລະ ຫາວ່າຫຼັກຄຳສອນເລື່ອງສິດທິເສລີພາບໃນການນັບຖື

[2] ເບິ່ງ ກິດຈະການ 5:1–11.

ສາສະໜາເປັນຄຳສອນນອກຮີດ, ສ່ວນຜູ້ທີ່ເຊື່ອໃນຫຼັກຄຳສອນດັ່ງກ່າວກໍຖືກກຽດຊັງ ແລະ ຖືກຂັບໄລ່ ໜີ. {GC 45.2}

ຄວາມຂັດແຍ້ງສືບຕໍ່ຢ່າງດຸເດືອດເປັນເວລາດົນນານ. ຕໍ່ມາ, ເມື່ອຄຣິສຕະຈັກທີ່ຫຼົງໄປນັ້ນຍັງມີການພົວພັນກັບຄວາມເທັດ ແລະ ຂາບໄຫວ້ຮູບເຄົາລົບຢູ່ ຄົນຈຳນວນໜ້ອຍທີ່ຍັງສັດຊື່ ຈຶ່ງຕັດສິນໃຈຍົກເລີກຄວາມສຳພັນກັບພວກເຂົາ. ພວກທີ່ສັດຊື່ເຫັນວ່າ ຈຳເປັນຕ້ອງແຍກກັນຖ້າຈະປະຕິບັດຕາມພຣະຄຳຂອງພຣະເຈົ້າ. ພວກເຂົາບໍ່ກ້າຍອມຮັບເອົາຄຳສອນຜິດທີ່ອັນຕະລາຍຕໍ່ຈິດວິນຍານຂອງຕົນ ຫຼື ວາງແບບຢ່າງທີ່ອັນຕະລາຍຕໍ່ຄວາມເຊື່ອຂອງລູກຫຼານ. ເພື່ອຄວາມສະຫງົບສຸກ ແລະ ການເປັນນ້ຳໜຶ່ງໃຈດຽວກັນແລ້ວ, ພວກເຂົາພ້ອມຍິນຍອມໃນທຸກເລື່ອງທີ່ສອດຄ່ອງກັບຄວາມສັດຊື່ຕໍ່ພຣະເຈົ້າ. ແຕ່ໃນຂະນະດຽວກັນກໍຮູ້ສຶກວ່າ ຄວາມສະຫງົບສຸກນັ້ນແພງເກີນໄປຖ້າຕ້ອງແລກດ້ວຍຫຼັກການທີ່ຖືກຕ້ອງ. ຖ້າການເປັນນ້ຳໜຶ່ງໃຈດຽວກັນນັ້ນຕ້ອງແລກມາດ້ວຍຫຼັກຄວາມຈິງ ແລະ ຄວາມຊອບທຳ ກໍຈົ່ງປ່ອຍໃຫ້ມີຄວາມຂັດແຍ້ງກັນຕໍ່ໄປ, ເຖິງຂັ້ນສົ່ງຄາມກໍຍອມໃຫ້ເກີດ. {GC 45.3}

ຈະເປັນຜົນດີຕໍ່ຄຣິສຕະຈັກ ແລະ ຕໍ່ຊາວໂລກ ຖ້າຫຼັກການທີ່ກະຕຸ້ນຈິດໃຈຂອງຜູ້ທີ່ສັດຊື່ໃນສະໄໝນັ້ນ ໄດ້ຮັບການຟື້ນຟູຂຶ້ນໃໝ່ໃນຫົວໃຈຂອງຜູ້ທີ່ອ້າງວ່າເປັນຄົນຂອງພຣະເຈົ້າໃນສະໄໝນີ້. ເປັນຕາໜ້າໃຈຫາຍ ທີ່ຄົນຈຳນວນຫຼາຍຂາດການເອົາໃຈໃສ່ຕໍ່ຄຳສອນຕ່າງ ໆ ທີ່ເປັນເສົາຫຼັກຂອງຄຣິສຕະສາສະໜາ. ມີຫຼາຍຄົນເຊື່ອວ່າຄຳສອນເຫຼົ່ານີ້ບໍ່ສຳຄັນ. ແຕ່ການປະຖິ້ມຄຳສອນດັ່ງກ່າວໄດ້ເສີມກຳລັງໃຫ້ແກ່ຜູ້ຮັບໃຊ້ຂອງຊາຕານໃຫ້ເຂັ້ມແຂງຂຶ້ນ ຈົນມີຄົນຈຳນວນຫຼວງຫຼາຍອ້າງວ່າຕົນເປັນສາວົກຂອງພຣະຄຣິສ ໃນຂະນະທີ່ຍັງຍຶນດີຮັບເອົາທິດສະດີທີ່ຜິດພ້ຽນ ແລະ ການຫຼອກລວງທີ່ອັນຕະລາຍຢູ່, ເຊິ່ງໃນສະໄໝກ່ອນຄົນທີ່ສັດຊື່ຕໍ່ພຣະເຈົ້າໄດ້ສ່ຽງຊີວິດເພື່ອຕ້ານທານ ແລະ ເປີດໂປງທິດສະດີ ແລະ ການຫຼອກລວງເຫຼົ່ານັ້ນ. {GC 46.1}

ໂດຍແທ້ຈິງແລ້ວ, ພວກຄຣິສຕຽນໃນຍຸກທຳອິດເປັນຄົນແປກຖິ່ນແປກໜ້າໃນໂລກ. ການດຳເນີນຊີວິດແບບບໍ່ມີບ່ອນຕຳໜິ ແລະ ຄວາມເຊື່ອໝັ້ນຢ່າງເດັດດ່ຽວເປັນການຕັກເຕືອນຄົນບາບຢູ່ຕະຫຼອດເວລາ ເຊິ່ງເຮັດໃຫ້ພວກເຂົາຮູ້ສຶກໃຈບໍ່ດີ. ເຖິງແມ່ນວ່າຄົນສັດຊື່ຕໍ່ພຣະເຈົ້າມີຈຳນວນໜ້ອຍ, ບໍ່ມີເງິນຫຼາຍ ແລະ ບໍ່ມີຍົດຕຳແໜ່ງ ຫຼື ກຽດສັກສີ, ແຕ່ວ່າເມື່ອຄົນທີ່ເຮັດຄວາມຊົ່ວໄດ້ຮັບຮູ້ເຖິງອຸປະນິໄສ ແລະ ຄຳສອນຂອງຄຣິສຕຽນກໍເກີດຄວາມຢ້ານກົວ. ສະນັ້ນ, ຄົນຊົ່ວຈຶ່ງກຽດຊັງຄົນຂອງພຣະເຈົ້າເໝືອນກາອິນກຽດຊັງອາເບັນ.[3] ພວກທີ່ບໍ່ຢາກຟັງການຕັກເຕືອນຂອງພຣະວິນຍານບໍຣິສຸດໄດ້ຂ້າຄົນຂອງພຣະເຈົ້າດ້ວຍເຫດຜົນດຽວກັນທີ່ກາອິນຂ້າອາເບັນ, ເປັນເຫດຜົນດຽວກັນກັບທີ່ຄົນຢິວປະຕິເສດພຣະຜູ້ຊ່ວຍໃຫ້ລອດ ແລະ ຄຶງພຣະອົງໄວ້ເທິງໄມ້ກາງແຂນ, ຍ້ອນວ່າຄວາມບໍຣິສຸດຂອງພຣະອົງໄດ້ຕອກຢ້ຳຢູ່ຕະຫຼອດເວລາວ່າ ພວກເຂົາເຫັນແກ່ຕົວ ແລະ ບໍ່ບໍຣິສຸດ. ຕັ້ງແຕ່ສະໄໝພຣະຄຣິສຈົນເຖິງປັດຈຸບັນ ສາວົກທີ່ສັດຊື່ກໍໄດ້ຖືກຄົນທີ່ຫຼົງໄຫຼໃນຄວາມບາບກຽດຊັງ ແລະ ຕໍ່ຕ້ານ. {GC 46.2}

ແລ້ວເຮົາຈະເອີ້ນຂ່າວປະເສີດວ່າ ເປັນຂ່າວແຫ່ງສັນຕິສຸກສັນຕິພາບໄດ້ແນວໃດ? ເມື່ອເອຊາຢາພະຍາກອນເຖິງການບັງເກີດຂອງພຣະຄຣິສ, ເພິ່ນໄດ້ຖວາຍພຣະນາມແດ່ພຣະອົງວ່າ “ອົງສັນຕິຣາດ.” (ເອຊາຢາ 9:6). ເມື່ອເຫຼົ່າທູດສະຫວັນໄດ້ປະກາດໃຫ້ພວກຜູ້ລ້ຽງແກະວ່າ ອົງພຣະຄຣິສໄດ້ບັງເກີດແລ້ວ ພວກເຂົາໄດ້ຮ້ອງເພງຢູ່ເໜືອທີ່ຮາບພຽງແຫ່ງເບັດເລເຮັມວ່າ: “ພຣະຣັດສະໝີຈົ່ງມີແດ່ພຣະເຈົ້າໃນສະຫວັນທີ່ສູງສຸດ ແລະ ທີ່ແຜ່ນດິນໂລກຈົ່ງມີສັນຕິສຸກແກ່ມະນຸດທັ້ງປວງ.” (ລູກາ 2:14). ຖ້າຫາກວ່າເບິ່ງຢ່າງຜິວເຜີນແລ້ວ ຄຳພະຍາກອນເຫຼົ່ານີ້ເບິ່ງຄືຂັດແຍ້ງກັບຖ້ອຍຄຳຂອງພຣະຄຣິສທີ່ກ່າວວ່າ: “ເຮົາ

[3] ເບິ່ງ ປະຖົມມະການບົດທີ 4.

ບໍ່ໄດ້ມາເພື່ອນຳຄວາມສະຫງົບສຸກມາໃຫ້ ແຕ່ໃຫ້ມີດາບ.” (ມັດທາຍ 10:34). ແຕ່ຖ້າຫາກວ່າ ເຂົ້າໃຈຢ່າງຖືກຕ້ອງແລ້ວ ສອງສິ່ງນີ້ສອດຄ່ອງກັນຢ່າງກົມກືນ. ຂ່າວປະເສີດແມ່ນຂ່າວແຫ່ງສັນຕິສຸກ ສັນຕິພາບ. ຖ້າມີການຮັບເອົາ ແລະ ປະຕິບັດຕາມລະບົບຄຳສອນຂອງສາສະໜາຄຣິສແລ້ວ ກໍຈະມີ ສັນຕິພາບ, ຄວາມປອງດອງ ແລະ ຄວາມສຸກຢູ່ທົ່ວໂລກ. ທຸກຄົນທີ່ຮັບເອົາຄຳສອນຂອງພຣະຄຣິສ ກໍ ກາຍເປັນພີ່ນ້ອງກັນທີ່ມີຄວາມຮັກແພງສະໜິດສະໜົມ. ພຣະເຢຊູຊົງມີພາລະກິດນຳພາມະນຸດໃຫ້ຄືນດີ ກັບພຣະເຈົ້າ ແລະ ເມື່ອຄືນດີກັບພຣະເຈົ້າແລ້ວ ກໍຈະສາມາດຄືນດີກັບເພື່ອນມະນຸດດ້ວຍກັນ. ແຕ່ ຊາວໂລກສ່ວນໃຫຍ່ຢູ່ພາຍໃຕ້ການຄວບຄຸມຂອງຊາຕານ ສັດຕູຜູ້ຮ້າຍກາດຂອງພຣະຄຣິສ. ຂ່າວປະເສີດ ສອນຫຼັກການແຫ່ງຊີວິດທີ່ຂັດແຍ້ງກັບບໍ່ໄສ ແລະ ຄວາມປາຖະໜາຂອງຊາວໂລກ, ພວກເຂົາຈຶ່ງລຸກຮື້ ຂຶ້ນຕໍ່ຕ້ານ. ພວກເຂົາກ່າວຊັງຄວາມບໍຣິສຸດທີ່ເປີດເຜີຍຄວາມຜິດບາບຂອງຕົນ ເພາະເຮັດໃຫ້ຮູ້ສຶກວ່າຖືກ ຕຳໜິ. ພວກເຂົາຈຶ່ງຂົ່ມເຫັງ ແລະ ທຳລາຍຜູ້ທີ່ຮຽກຮ້ອງໃຫ້ຮັບເອົາຫຼັກການແຫ່ງຊີວິດດັ່ງກ່າວ. ຍ້ອນ ມີຄົນກ່ຽວຊັງ ແລະ ຕໍ່ຕ້ານຄວາມຈິງອັນສູງສົ່ງຂອງຂ່າວປະເສີດ, ຂ່າວປະເສີດຈຶ່ງຖືກເອີ້ນວ່າເປັນ ດາບ. *{GC 46.3}*

ຜົນດີຂອງການຖືກຂົ່ມເຫັງ

ສຳລັບຫຼາຍຄົນທີ່ມີຄວາມເຊື່ອອ່ອນແອ ການຊົງນຳຂອງພຣະເຈົ້າ ທີ່ຍອມໃຫ້ຄົນຊົ່ວຂົ່ມເຫັງຄົນ ຊອບທຳນັ້ນ ເປັນເລື່ອງທີ່ເຂົ້າໃຈຍາກ. ບາງຄົນພ້ອມທີ່ຈະເຊົາໄວ້ວາງໃຈໃນພຣະເຈົ້າ ເພາະພຣະອົງ ຍອມໃຫ້ຄົນຕ່ຳຊ້າຈະເລີນຂຶ້ນ ໃນຂະນະທີ່ຄົນດີ ແລະ ຄົນບໍຣິສຸດຖືກຄົນຊົ່ວຂົ່ມເຫັງຢ່າງໃຈດຳ ອຳມະຫິດ. ພວກເຂົາຖາມວ່າ ເປັນໄປໄດ້ຢ່າງໃດທີ່ພຣະເຈົ້າຜູ້ຊົງເມດຕາ, ຊົງຍຸຕິທຳ ແລະ ຊົງມີ ອຳນາດສູງສຸດ ຈະຍອມໃຫ້ເກີດການກົດຂີ່ ແລະ ຄວາມບໍ່ເປັນທຳເຊັ່ນນີ້. ແຕ່ບໍ່ແມ່ນທຸລະຂອງເຮົາ ທີ່ຈະຖາມຄຳຖາມດັ່ງກ່າວ. ພຣະເຈົ້າຊົງໃຫ້ຫຼັກຖານພຽງພໍວ່າພຣະອົງຊົງຮັກເຮົາ; ສະນັ້ນ, ເຮົາຈຶ່ງບໍ່ ຄວນສົງໄສໃນພຣະຄຸນຂອງພຣະເຈົ້າເມື່ອບໍ່ເຂົ້າໃຈການຊົງນຳຂອງພຣະອົງ. ພຣະຜູ້ຊ່ວຍໃຫ້ລອດຊົງເຫັນ ວ່າຜູ້ຕິດຕາມພຣະອົງຈະຖືກທົດລອງໃຫ້ເກີດຄວາມສົງໄສ ເມື່ອພວກເຂົາຕົກຢູ່ໃນສະພາບທີ່ມືດແປດ ດ້ານ ແລະ ຕ້ອງທົນຕໍ່ຄວາມທຸກຍາກລຳບາກ. ພຣະອົງຊົງກ່າວແກ່ພວກສາວົກຂອງພຣະອົງວ່າ: “ຈົ່ງ ລະນຶກເຖິງຂໍ້ຄວາມທີ່ເຮົາໄດ້ບອກພວກເຈົ້າວ່າ, ‘ຂ້ອຍໃຊ້ບໍ່ຫ່ອນໃຫຍ່ກວ່ານາຍຂອງຕົນ.’ ຖ້າພວກເຂົາ ຂົ່ມເຫັງເຮົາ ພວກເຂົາຈະຂົ່ມເຫັງເຈົ້າທັງຫຼາຍເໝືອນກັນ.” (ໂຢຮັນ 15:20). ຄົນຊົ່ວຊ້າເລວຊາມບໍ່ ສາມາດທຳລະມານສາວົກຂອງພຣະເຢຊູໄດ້ຫຼາຍກວ່າທີ່ພຣະອົງຊົງຖືກທຳລະມານເພື່ອເຮົາ. ຜູ້ທີ່ພຣະເຈົ້າ ຊົງຮຽກເອີ້ນໃຫ້ຖືກທໍລະມານ ແລະ ຖືກຂ້າຕາຍຍ້ອນຄວາມເຊື່ອ ບໍ່ໄດ້ຖືວ່າມີປະສົບການທີ່ປະຫຼາດແຕ່ ຢ່າງໃດ ເພາະວ່າພວກເຂົາພຽງແຕ່ດຳເນີນຕາມຮອຍພຣະບາດຂອງພຣະເຢຊູຄຣິສຜູ້ຊົງເປັນພຣະບຸດທີ່ ຮັກຂອງພຣະເຈົ້າເທົ່ານັ້ນ. *{GC 47.1}*

“ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງເສີຍຊ້າທີ່ຈະເຮັດໃຫ້ພຣະສັນຍາຂອງພຣະອົງສຳເລັດ.” (2 ເປໂຕ 3:9). ພຣະອົງບໍ່ໄດ້ລືມ ຫຼື ປະຖິ້ມລູກຂອງພຣະອົງ ແຕ່ຊົງຍອມໃຫ້ຄົນຊົ່ວເປີດເຜີຍທາດແທ້ຂອງຕົນອອກ ມາ ເພື່ອຄົນທີ່ປາຖະໜາທີ່ຈະເຮັດຕາມນ້ຳພຣະໄທຂອງພຣະອົງຈະບໍ່ໄດ້ຖືກຫຼອກລວງໃຫ້ຫຼົງໄປຕາມຄົນ ອະທຳດັ່ງກ່າວ. ນອກຈາກນັ້ນ, ຄົນຊອບທຳຖືກວາງໃສ່ໃນເຕົາຫຼອມແຫ່ງຄວາມທຸກ ເພື່ອຊຳລະພວກເຂົາ ໃຫ້ບໍຣິສຸດ, ເພື່ອວ່າແບບຢ່າງຂອງພວກເຂົາຈະໄດ້ໂນ້ມນ້າວຄົນອື່ນໃຫ້ຮູ້ວ່າຄວາມເຊື່ອ ແລະ ສິນລະທຳ ອັນດີງາມມີຢູ່ຈິງ. ຊີວິດທີ່ສະໝ່ຳສະເໝີຂອງຄົນຊອບທຳ ຈຶ່ງກ່າວໂທດຄົນຊົ່ວ ແລະ ຄົນທີ່ບໍ່ຍອມ ເຊື່ອ. *{GC 48.1}*

ພຣະເຈົ້າຊົງອະນຸຍາດໃຫ້ຄົນຊົ່ວຈະເລີນ ແລະ ສະແດງຄວາມກຽດຊັງຕໍ່ພຣະອົງ ເພື່ອວ່າເມື່ອ ພວກເຂົາເຮັດບາບຈົນເຕັມພິກັດແລ້ວ, ທຸກຄົນຈະຍອມຮັບວ່າ ພຣະອົງຊົງຍຸຕິທຳ ແລະ ຊົງເມດຕາ ໃນການທຳລາຍພວກເຂົາຈົນໝົດສິ້ນ. ວັນແຫ່ງການແກ້ແຄ້ນຂອງພຣະເຈົ້າຫຍັບເຂົ້າມາໃກ້, ໃນວັນນັ້ນ ທຸກຄົນທີ່ລະເມີດຕໍ່ກົດບັນຍັດຂອງພຣະເຈົ້າ ແລະ ກົດຂີ່ຂົ່ມເຫັງຄົນຂອງພຣະອົງ ຈະຕ້ອງໄດ້ຮັບໂທດ ຕາມການກະທຳຂອງຕົນ. ໃນຄາວນັ້ນຄວາມໂຫດຮ້າຍ ແລະ ຄວາມບໍ່ເປັນທຳທຸກຢ່າງທີ່ພວກເຂົາໄດ້ ເຮັດຕໍ່ຜູ້ທີ່ສັດຊື່ຂອງພຣະເຈົ້າ ກໍຈະຖືກລົງໂທດໃນຖານທຳຮ້າຍຕໍ່ອົງພຣະຄຣິສ. *{GC 48.2}*

ແຕ່ມີຄຳຖາມທີ່ສຳຄັນກວ່ານີ້ ທີ່ຄຣິສຕະຈັກໃນສະໄໝຂອງພວກເຮົາຄວນເອົາໃຈໃສ່. ອັກຄະສາວົກ ໂປໂລໄດ້ກ່າວວ່າ: “ບັນດາຄົນທີ່ປາຖະໜາຈະດຳເນີນຊີວິດຄຣິສຕຽນ ເປັນຄົນນັບຖືພຣະເຈົ້າຢ່າງຖືກຕ້ອງ ກໍຈະຖືກກົດຂີ່ຂົ່ມເຫັງ.” (2 ຕີໂມທຽວ 3:12). ແລ້ວເປັນຫຍັງຈຶ່ງບໍ່ຄ່ອຍມີການກົດຂີ່ຂົ່ມເຫັງ? ມີເຫດຜົນ ດຽວ ກໍຄືຄຣິສຕະຈັກໄດ້ປັບປ່ຽນໄປຕາມມາດຕະຖານຂອງໂລກ, ສະນັ້ນຈຶ່ງບໍ່ມີຜູ້ໃດຕໍ່ຕ້ານ. ຄວາມເຊື່ອຖື ຂອງຄຣິສຕຽນໃນທຸກມື້ນີ້ ບໍ່ໄດ້ບໍຣິສຸດເໝືອນດັ່ງໃນສະໄໝຂອງພຣະຄຣິສ ແລະ ພວກອັກຄະສາວົກ. ເບິ່ງຄືວ່າສາເຫດທີ່ຊາວໂລກມີຄວາມນິຍົມຊົມເຊີຍຕໍ່ສາສະໜາຄຣິສ ກໍຍ້ອນວ່າຄົນໃນຄຣິສຕະຈັກຂາດ ການອຸທິດຕົນຢ່າງຈິງໃຈ, ມີການຍິນຍອມໄປຕາມຄວາມບາບ ແລະ ຂາດການເອົາໃຈໃສ່ຕໍ່ຫຼັກຄວາມ ຈິງອັນສຳຄັນແຫ່ງພຣະຄຳຂອງພຣະເຈົ້າ. ແຕ່ຖ້າມີການຟື້ນຟູຄວາມເຊື່ອ ແລະ ຣິດເດດຕາມຮູບແບບ ຂອງຄຣິສຕະຈັກລຸ້ນທຳອິດ ການບຽດບຽນກໍຈະຕາມມາ ແລະ ກອງໄຟແຫ່ງການກົດຂີ່ຂົ່ມເຫັງກໍຈະ ຖືກຈູດຂຶ້ນໃໝ່. *{GC 48.3}*

3

ຍຸກມືດຝ່າຍຈິດວິນຍານ

ຫ່າງຈາກຄວາມຈິງເທື່ອລະໜ້ອຍ

ອັກຄະສາວົກໂປໂລໄດ້ຂຽນໃນຈົດໝາຍສະບັບທີສອງທີ່ສົ່ງໄປຍັງຄຣິສຕະຈັກໃນເມືອງເທສະໂລນີກ ໄວ້ລ່ວງໜ້າ ເຖິງການພັດຫຼົງໄປຈາກຄວາມເຊື່ອຄັ້ງໃຫຍ່ທີ່ຈະເກີດຂຶ້ນເມື່ອລະບອບສັນຕະປາປາຂຶ້ນສູ່ອຳນາດ. ເພິ່ນກ່າວວ່າພຣະຄຣິສຈະບໍ່ສະເດັດກັບມາ “ຈົນກວ່າຈະມີການທໍລະຍົດເກີດຂຶ້ນເສຍກ່ອນ ແລະ ຜູ້ຊົ່ວຮ້າຍນັ້ນຈະອອກມາປາກົດ ຄືຜູ້ຖືກຊົງໝາຍໄວ້ສຳລັບຄວາມວິນາດຈິບຫາຍ, ຄືຜູ້ຄັດຄ້ານ ແລະ ຍົກຕົວຂຶ້ນຕໍ່ສູ້ທຸກໆສິ່ງທີ່ມີຊື່ວ່າເປັນພຣະ ຫຼື ທີ່ເຂົາໄຫວ້ນະມັດສະການ ນັ້ນ ມັນຈຶ່ງຈະໄດ້ນັ່ງລົງໃນພຣະວິຫານຂອງພຣະເຈົ້າ ສະແດງຕົວເປັນເໝືອນພຣະເຈົ້າ.” ນອກຈາກນັ້ນ, ອາຈານໂປໂລຍັງເຕືອນພີ່ນ້ອງຜູ້ເຊື່ອວ່າ “ການຊົ່ວຮ້າຍອັນເລິກລັບກຳລັງເຮັດລັບໆຢູ່.” (2 ເທສະໂລນີກ 2:3, 4, 7 LO1972). ແມ່ນແຕ່ໃນຍຸກສະໄໝເລີ່ມຕົ້ນ ເພິ່ນກໍເຫັນວ່າມີຄວາມຜິດຕ່າງໆ ກຳລັງຄືບຄານເຂົ້າມາໃນຄຣິສຕະຈັກທີ່ຈະປູທາງໃຫ້ລະບອບສັນຕະປາປາເກີດຂຶ້ນ. *{GC 49.1}*

ໃນເບື້ອງຕົ້ນ, “ຄວາມເລິກລັບແຫ່ງຄວາມບາບຊົ່ວ” ໄດ້ເຄື່ອນໄຫວເທື່ອລະໜ້ອຍຢ່າງລັບໆ ແລະ ມິດງຽບ ແຕ່ຕໍ່ມາເມື່ອມີອຳນາດຫຼາຍຂຶ້ນ ແລະ ມີຄົນເລີ່ມຫຼົງຕາມ ມັນກໍເຄື່ອນໄຫວຕາມພາລະກິດຫຼອກລວງ ແລະ ໝິ່ນປະໝາດພຣະເຈົ້າຢ່າງເປີດເຜີຍ. ທຳນຽມຂອງຄົນທີ່ບໍ່ນັບຖືພຣະເຈົ້າກໍລັກເຂົ້າມາໃນຄຣິສຕະຈັກເທື່ອລະໜ້ອຍ ຈົນເກືອບຈະບໍ່ມີໃຜສັງເກດການປ່ຽນແປງ. ນິໄສການຍິນຍອມຕໍ່ຄວາມບາບ ແລະ ການປັບປ່ຽນຕາມສະໄໝນິຍົມ ຖືກກີດຂວາງໃນຊ່ວງເວລາໜຶ່ງພາຍໃຕ້ການກົດຂີ່ຂົ່ມເຫັງຢ່າງໂຫດຮ້າຍຈາກຄົນທີ່ນັບຖືລັດທິນອກສາສະໜາ. ແຕ່ເມື່ອການຂົ່ມເຫັງຈົບລົງ ແລະ ສາສະໜາຄຣິສກາຍເປັນທີ່ຍອມຮັບໃນພຣະຣາຊວັງຂອງກະສັດ, ພວກຜູ້ນຳຄຣິສຕະຈັກໄດ້ເອົາຄວາມລຽບງ່າຍຂອງພຣະຄຣິສ ແລະ ຂອງບັນດາອັກຄະສາວົກວາງລົງ ແລ້ວຮັບເອົາທັງພິທີກຳອັນຟົດຟື້ນ ແລະ ຄວາມຫຍິ່ງຍະໂສແບບພວກປະໂຣຫິດຂອງບັນດາພຣະທຽມເທັດ ແລະ ແບບຜູ້ນຳທີ່ບໍ່ນັບຖືພຣະເຈົ້າມາແທນທີ່; ພວກເຂົາຄວນຈະຢຶດຖືກົດບັນຍັດຂອງພຣະເຈົ້າ ແຕ່ຊ້ຳພັດຮັບເອົາທິດສະດີ ແລະ ທຳນຽມຂອງມະນຸດ. ການທີ່ຈັກກະພັດຄອນສະຕັນຕິນ (Constantine) ອ້າງວ່າກັບໃຈໃນຊ່ວງຕົ້ນຂອງສະຕະວັດທີ 4 ຖືກຕອບຮັບດ້ວຍຄວາມຊົມຊື່ນຍິນດີ, ແລ້ວວັດທະນະທຳຝ່າຍໂລກໃນຮູບແບບຂອງຄວາມຊອບທຳໄດ້ເຂົ້າມາໃນຄຣິສຕະຈັກ. ບັດນີ້ຄວາມເສື່ອມເສຍກໍຂະຫຍາຍເປັນວົງກວ້າງຢ່າງໄວວາ. ພາຍນອກເບິ່ງຄືວ່າ ລັດທິນອກສາສະໜາຈະຕ້ອງປະລາໄຊ, ແຕ່ວ່າຄວາມຈິງແລ້ວມັນຄືຝ່າຍຊະນະ ຍ້ອນວ່າອຸດົມການຂອງມັນໄດ້ຄອບງຳເໜືອຄຣິສຕະຈັກ. ຄຳສອນ, ພິທີກຳ ແລະ ຄວາມງົມງວາຍຂອງລັດທິດັ່ງກ່າວ ໄດ້ຖືກນຳເຂົ້າມາປະສົມປະສານກັບຄວາມເຊື່ອ ແລະ ການນະມັດສະການຂອງຄົນທີ່ອ້າງວ່າເປັນສາວົກຂອງພຣະຄຣິສ. *{GC 49.2}*

ຄວາມຍິນຍອມທີ່ອັນຕະລາຍ

ຄວາມຍິນຍອມລະຫວ່າງລັດທິນອກສາສະໜາກັບສາສະໜາຄຣິສນຳໄປສູ່ "ຜູ້ຊົ່ວຮ້າຍ" ຄືຜູ້ຄັດຄ້ານ ແລະ ຍົກຕົວຂຶ້ນຕໍ່ສູ້ທຸກໆສິ່ງທີ່ມີຊື່ວ່າເປັນພຣະເຈົ້າ ຕາມທີ່ທຳນວາຍໄວ້ໃນພຣະຄຳພີ. (ເບິ່ງ 2 ເທສະໂລນີກ 2:3–4). ລະບົບສາສະໜາທຽມເທັດອັນຍິ່ງໃຫຍ່ເປັນຜົນງານຊິ້ນເອກຂອງຊາຕານ ແລະ ເປັນອະນຸສອນແຫ່ງຄວາມພະຍາຍາມຂອງມັນທີ່ຈະນັ່ງບັນລັງເພື່ອປົກຄອງໂລກຕາມໃຈຕົນເອງ. *{GC 50.1}*

ຊາຕານເຄີຍພະຍາຍາມເຮັດຂໍ້ຕົກລົງກັບພຣະຄຣິສ. ມັນເຂົ້າມາທົດລອງພຣະບຸດຂອງພຣະເຈົ້າໃນຖິ່ນແຫ້ງແລ້ງກັນດານ ດ້ວຍການສຳແດງອານາຈັກທັງຫຼາຍ ແລະ ຄວາມຮຸ່ງເຮືອງຂອງອານາຈັກເຫຼົ່ານັ້ນໃຫ້ພຣະອົງເບິ່ງ. ແລ້ວມັນສະເໜີວ່າຈະມອບທັງໝົດນັ້ນໄວ້ໃນພຣະຫັດຂອງພຣະອົງ ຂໍພຽງແຕ່ໃຫ້ພຣະອົງຍອມຮັບວ່າມັນເອງໃນຖານະເຈົ້າແຫ່ງຄວາມມືດ ຍິ່ງໃຫຍ່ກວ່າພຣະອົງ. ພຣະຄຣິສຊົງປະນາມການປະໝາດຂອງຊາຕານ ແລະ ໄລ່ໃຫ້ມັນໜີໄປ. ແຕ່ວ່າຊາຕານໄດ້ຮັບຜົນສຳເລັດຫຼາຍຂຶ້ນ ເມື່ອໃຊ້ວິທີການດຽວກັນນີ້ກັບມະນຸດ. ຄົນໃນຄຣິສຕະຈັກຈຶ່ງໄປຂໍແຮງສະໜັບສະໜູນຈາກບຸກຄົນທີ່ຊາວໂລກເຫັນວ່າສຳຄັນ ເພື່ອຮັບກຽດ ແລະ ຜົນປະໂຫຍດ, ແລະເມື່ອປະຕິເສດພຣະຄຣິສເຊັ່ນນີ້ ພວກເຂົາຈຶ່ງໄປຍອມສະແດງຄວາມຈົງຮັກພັກດີຕໍ່ຕົວແທນຂອງຊາຕານ ກໍຄືເຈົ້າຄະນະແຫ່ງນະຄອນໂຣມ ຫຼື ສັນຕະປາປານັ້ນເອງ. *{GC 50.2}*

ຄຳສອນຫຼັກອັນໜຶ່ງຂອງຄຣິສຕະຈັກໂຣມ ກໍຄືສັນຕະປາປາເປັນປະມຸກແຫ່ງຊຸມນຸມຜູ້ເຊື່ອໃນພຣະ-ຄຣິສທົ່ວໂລກ ພ້ອມທັງມີອຳນາດສູງສຸດເໜືອເຈົ້າຄະນະ ແລະ ບາດຫຼວງທົ່ວໃຕ້ຟ້າປົກຖະພີ. ຍິ່ງກວ່ານັ້ນ, ສັນຕະປາປາຍັງໄດ້ຮັບນາມມະຍົດວ່າເປັນພຣະເຈົ້າ. ມີຄົນເອີ້ນເພີ່ນວ່າ "ອົງພຣະຜູ້ເປັນເຈົ້າ ພຣະເຈົ້າອົງສັນຕະປາປາ" ແລະ ຢືນຢັນວ່າເພີ່ນຖືກຕ້ອງສະເໝີ ແລະ ບໍ່ມີການຜິດພາດ. ສັນຕະປາປາຕ້ອງການໃຫ້ມະນຸດທຸກຄົນນັບຖືເພີ່ນ. ຊາຕານຍັງຄົງໃຊ້ຄຣິສຕະຈັກໂຣມເພື່ອຮຽກຮ້ອງເອົາສິ່ງດຽວກັນກັບທີ່ມັນເຄີຍຮຽກຮ້ອງເອົາຈາກພຣະຄຣິສໃນຖິ່ນແຫ້ງແລ້ງກັນດານ, ແລ້ວກໍມີຄົນຈຳນວນຫຼວງຫຼາຍຍິນດີນ້ອມລົງຂາບໄຫວ້ມັນ. *{GC 50.3}*

ສັນຕະປາປາອ້າງອຳນາດ

ສັນຕະປາປາທ້າທາຍສະຫວັນ ໂດຍການໃຫ້ມະນຸດນັບຖືຕົນເອງຄືກັບນັບຖືພຣະເຈົ້າ, ແຕ່ຜູ້ທີ່ເຄົາລົບຢຳເກງພຣະເຈົ້າໄດ້ຕອບໂຕ້ເພີ່ນ ເໝືອນທີ່ພຣະຄຣິສຊົງໂຕ້ຕອບການທົດລອງອັນແນບນຽນຂອງຊາຕານວ່າ, "ຈົ່ງນະມັດສະການອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ ແລະ ບົວລະບັດຮັບໃຊ້ແຕ່ພຣະອົງເທົ່ານັ້ນ." (ລູກາ 4:8). ບໍ່ມີຮ່ອງຮອຍໃນພຣະຄຳພີວ່າ ພຣະເຈົ້າຊົງແຕ່ງຕັ້ງມະນຸດຜູ້ໃດເປັນຫົວໜ້າຂອງຄຣິສຕະຈັກ. ຄຳສອນທີ່ວ່າສັນຕະປາປາເປັນປະມຸກຜູ້ສູງສຸດຂອງຄຣິສຕະຈັກ ຂັດຕໍ່ຄຳສອນໃນພຣະຄຳພີໂດຍກົງ. ສັນຕະປາປາບໍ່ມີອຳນາດຫຍັງເໜືອຄຣິສຕະຈັກນອກຈາກອຳນາດທີ່ເພີ່ນຍາດເອົາ. *{GC 51.1}*

ຜູ້ທີ່ເຫຼື້ອມໃສໃນຄຣິສຕະຈັກໂຣມໄດ້ກ່າວຫາຊາວໂປຣແຕັສຕັງ ວ່າພວກເຂົາເປັນຜູ້ສອນທຽມເທັດ ແລະ ຈົງໃຈແຍກຈາກຄຣິສຕະຈັກທີ່ແທ້ຈິງ. ແຕ່ຂໍ້ກ່າວຫາດັ່ງກ່າວຊ້ຳພັດຖືກພວກເຂົາເອງ. ແມ່ນພວກໂຣມເອງທີ່ໄດ້ວາງທຸງຂອງພຣະຄຣິສລົງ ແລະ ຫັນຫຼັງໃສ່ "ຄວາມເຊື່ອ ເຊິ່ງພຣະເຈົ້າໄດ້ມອບໃຫ້ແກ່ປະຊາຊົນຂອງພຣະອົງເທື່ອດຽວເປັນການສິ້ນສຸດ." (ຢູດາ 3). *{GC 51.2}*

ຊາຕານຮູ້ດີວ່າ ພຣະຄຳພີຈະເຮັດໃຫ້ມະນຸດສາມາດຮູ້ທັນການຫຼອກລວງຂອງມັນ ແລະ ຈະ

ຊ່ວຍເສີມກຳລັງໃຫ້ພວກເຂົາສາມາດຕ້ານທານອຳນາດຂອງມັນໄດ້. ພຣະຜູ້ໂຜດໃຫ້ພົ້ນຂອງໂລກ ຊົງ ຕ້ານທານການໂຈມຕີຂອງມັນດ້ວຍພຣະຄຳພີ. ທຸກຄັ້ງທີ່ມັນຈູໂຈມ ພຣະຄຣິສຊົງຍົກໂລ້ແຫ່ງຄວາມ ຈິງນິຣັນຂຶ້ນ ດ້ວຍການກ່າວວ່າ: “ມີຄຳຂຽນໄວ້ໃນພຣະຄຳພີວ່າ.” ພຣະອົງຊົງຕອບຄຳລໍ້ລວງທຸກຢ່າງ ຂອງສັດຕູດ້ວຍປັນຍາ ແລະ ຣິດອຳນາດແຫ່ງພຣະຄຳຂອງພຣະເຈົ້າ. ຖ້າຊາຕານຈະຍັງຄົງຄອບງຳ ມະນຸດ ແລະ ເຮັດໃຫ້ອຳນາດທີ່ສັນຕະປາປາຍາດເອົາມານັ້ນເຂັ້ມແຂງໝັ້ນແກ່ນ, ມັນຈະຕ້ອງປ່ອຍໃຫ້ ຄົນທັ້ງຫຼາຍບໍ່ຮູ້ຈັກພຣະຄຳພີຕໍ່ໄປ, ເພາະວ່າພຣະຄຳພີຢ້ອງຍໍພຣະເຈົ້າ ແລະ ສອນເຖິງຄວາມຈຳກັດ ຂອງມະນຸດຢ່າງຖືກຕ້ອງ; ສະນັ້ນ, ຖ້າແຜນການຂອງຊາຕານຈະສຳເລັດ ກໍຕ້ອງປິດບັງ ແລະ ຢັບຢັ້ງ ຄຳສອນໃນພຣະຄຳພີໃຫ້ໄດ້. ຄຣິສຕະຈັກໂຣມກໍນຳໃຊ້ເຫດຜົນດັ່ງກ່າວ ແລະ ຫ້າມນຳພຣະຄຳພີ ໄປແຜ່ກະຈາຍເປັນເວລາຫຼາຍຮ້ອຍປີ. ປະຊາຊົນຖືກຫ້າມບໍ່ໃຫ້ອ່ານ ແລະ ບໍ່ໃຫ້ມີພຣະຄຳພີໄວ້ໃນ ເຮືອນ, ສ່ວນບາດຫຼວງ ແລະ ຜູ້ນຳຄຣິສຕະຈັກທີ່ຂາດຄຸນນະທຳ ໄດ້ຕີຄວາມໝາຍຂອງພຣະຄຳພີ ເພື່ອອ້າງສິດທິຂອງຕົນ. ໂດຍວິທີດັ່ງກ່າວ ມະນຸດທັງຫຼາຍສ່ວນໃຫຍ່ຈຶ່ງຍອມຮັບວ່າສັນຕະປາປາເປັນ ຕົວແທນຂອງພຣະເຈົ້າໃນໂລກ ໂດຍມີອຳນາດຂອງຄຣິສຕະຈັກ ແລະ ອຳນາດການປົກຄອງຢູ່ທີ່ ເພິ່ນ. *{GC 51.3}*

ພຣະຄຳພີເປັນເຄື່ອງພິສູດຄວາມຈິງ ແລະ ຄວາມເທັດ, ເມື່ອເອົາພຣະຄຳພີອອກໄປແລ້ວ ຊາຕານ ກໍເຄື່ອນໄຫວຕາມໃຈປາຖະໜາຂອງມັນ. ຄຳພະຍາກອນໃນພຣະຄຳພີໄດ້ກ່າວລ່ວງໜ້າວ່າ ລະບອບ ສັນຕະປາປາຈະ “ພະຍາຍາມປ່ຽນແປງກົດໝາຍ ແລະ ວັນສະຫຼອງຕ່າງ ໆ ທາງສາສະໜາ.” (ດານີເອນ 7:25). ສຳລັບວຽກງານດັ່ງກ່າວ ລະບອບນີ້ບໍ່ລໍຊ້າທີ່ຈະລົງມື. ຝ່າຍສັນຕະປາປາພະຍາຍາມຊັກຈູງຄົນ ໃຫ້ກັບໃຈ, ປະຖິ້ມການຂາບໄຫວ້ຮູບເຄົາລົບ ແລະ ສະໜັບສະໜູນໃຫ້ພວກເຂົາເປັນຄຣິສຕຽນພຽງແຕ່ ຊື່ ໂດຍໜາສິ່ງທົດແທນການຂາບໄຫວ້ຮູບເຄົາລົບດັ່ງກ່າວ ພ້ອມກັບຕັ້ງໃຫ້ມີການບູຊາຮູບປັ້ນ ແລະ ວັດຖຸ ສັກສິດເຂົ້າມາໃນການນະມັດສະການຂອງຄຣິສຕຽນເທື່ອລະເລັກລະໜ້ອຍ. ສຸດທ້າຍກໍມີການປະກາດ ເອີ້ນປະຊຸມສະພາຄຣິສຕະຈັກຄັ້ງໃຫຍ່ ແລະ ໃນກອງປະຊຸມດັ່ງກ່າວມີການລົງມະຕິວາງລະບົບລະບຽບ ໃຫ້ມີການຂາບໄຫວ້ຮູບເຄົາລົບໃນຄຣິສຕະຈັກ. ແລ້ວເພື່ອໃຫ້ການໝິ່ນປະໝາດນີ້ສົມບູນ, ຄຣິສຕະຈັກ ໂຣມຈຶ່ງຕັດເອົາກົດບັນຍັດຂໍ້ທີສອງຂອງພຣະເຈົ້າຖິ້ມ ເພາະວ່າຂໍ້ບັນຍັດດັ່ງກ່າວຫ້າມການຂາບໄຫວ້ ຮູບເຄົາລົບ,[1] ແລ້ວເພື່ອຮັກສາພຣະບັນຍັດໃຫ້ມີຄົບສິບຂໍ້, ພວກເຂົາຈຶ່ງເອົາຂໍ້ສຸດທ້າຍມາແບ່ງເປັນສອງ ຂໍ້. *{GC 51.4}*

ວັນບໍຣິສຸດແທ້ ແລະ ວັນປອມ

ການຍິນຍອມຕໍ່ລັດທິນອກສາສະໜາ ໄດ້ເປີດປະຕູໃຫ້ມີການປະໝາດຕໍ່ອຳນາດຂອງສະຫວັນຫຼາຍ ຂຶ້ນກວ່າເກົ່າ. ຊາຕານເຮັດວຽກຜ່ານຜູ້ນຳຄຣິສຕະຈັກທີ່ບໍ່ກັບໃຈ ເພື່ອໃຫ້ປ່ຽນແປງກົດບັນຍັດຂໍ້ທີ ສີ່ ແລະ ພະຍາຍາມຍົກເລີກວັນສະບາໂຕທີ່ພຣະເຈົ້າຊົງອວຍພອນໃຫ້ເປັນວັນບໍຣິສຸດສັກສິດຕັ້ງແຕ່ຄາວ ດັ້ງເດີມ[2] ແລະ ຕັ້ງວັນອາທິດມາແທນທີ່ ເຊິ່ງເປັນວັນທີ່ຄົນທີ່ບໍ່ນັບຖືພຣະເຈົ້າໃຊ້ຍົກຍ້ອງບູຊາດວງ ຕາເວັນ. ຊ່ວງທຳອິດພວກເຂົາບໍ່ໄດ້ພະຍາຍາມປ່ຽນແປງຢ່າງເປີດເຜີຍ; ໃນສອງສາມສະຕະວັດທຳອິດ ແຫ່ງຄຣິສຕະການ ຄຣິສຕຽນທຸກຄົນຍັງຄົງຮັກສາວັນສະບາໂຕອັນແທ້ຈິງ. ພວກເຂົາຮ້ອນໃຈທີ່ຈະ ຖວາຍກຽດແດ່ພຣະເຈົ້າ ແລະ ເຊື່ອໝັ້ນວ່າກົດບັນຍັດຂອງພຣະອົງບໍ່ສາມາດປ່ຽນແປງໄດ້; ດ້ວຍເຫດນີ້,

[1] ເບິ່ງ ອົບພະຍົບ 20:4–6.
[2] ເບິ່ງ ປະຖົມມະການ 2:2–3.

ຄົນໃນຊ່ວງທຳອິດນັ້ນຈຶ່ງເຝົ້າຮັກສາພຣະບັນຍັດຂອງພຣະເຈົ້າໄວ້ ແລະ ຖືວ່າເປັນສິ່ງສັກສິດ. ແຕ່ ຊາຕານເຄື່ອນໄຫວຢ່າງແນບນຽນຜ່ານຜູ້ຮັບໃຊ້ຂອງມັນ ເພື່ອຈຸດປະສົງທີ່ມັນຕ້ອງການ. ແລ້ວມີການຕັ້ງ ວັນອາທິດເປັນວັນສະເຫຼີມສະຫຼອງການຟື້ນຄືນພຣະຊົນຂອງພຣະຄຣິສ ເພື່ອໃຫ້ຄົນທັ້ງຫຼາຍໃສ່ໃຈໃນ ວັນດັ່ງກ່າວ. ມີການຈັດສາສະໜາພິທີໃນຂະນະທີ່ເຊື່ອຖືກັນວ່າ ເປັນວັນພັກຜ່ອນບັນເທີງໃຈ ສ່ວນວັນ ສະບາໂຕກໍຍັງຮັກສາເປັນວັນສັກສິດຄືເກົ່າ. *{GC 52.1}*

ຊາຕານໄດ້ວາງແຜນລ່ວງໜ້າເພື່ອໃຫ້ເປັນໄປຕາມເຈດຕະນາຂອງມັນ; ສະນັ້ນ, ກ່ອນພຣະຄຣິສຈະ ບັງເກີດ ມັນຈຶ່ງນຳພາຊາວຢິວໃຫ້ມີກົດລະບຽບຢ່າງຫຼວງຫຼາຍໃນການຮັກສາວັນສະບາໂຕ ເພື່ອໃຫ້ການ ຖືຮັກສານັ້ນເປັນພາລະ. ຫຼັງຍຸກທຳອິດ, ຊາຕານກໍອາໄສຄວາມເຂົ້າໃຈຜິດໃນວັນສະບາໂຕ ເພື່ອໃຫ້ ຄົນທັງຫຼາຍດູຖູກວ່າເປັນເລື່ອງຂອງສາສະໜາຢິວ. ໃນຂະນະທີ່ພວກຄຣິສຕຽນໂດຍທົ່ວໄປຖືວັນອາທິດ ເປັນເທດສະການທີ່ໜ້າຊົມຊື່ນຍິນດີ, ຊາຕານນຳພວກເຂົາໃຫ້ສະແດງຄວາມກຽດຊັງທີ່ມີຕໍ່ສາສະໜາ ຢິວ ດ້ວຍການເຮັດໃຫ້ວັນສະບາໂຕເປັນວັນອົດອາຫານ ແລະ ເປັນວັນເສົ້າໝອງ. *{GC 52.2}*

ໃນຊ່ວງຕົ້ນສະຕະວັດທີ 4 ຈັກກະພັດຄອນສະຕັນຕິນ ອອກຄຳສັ່ງໃຫ້ມີການຈັດງານສະຫຼອງ ທຸກວັນອາທິດທົ່ວອານາຈັກໂຣມ.[3] ປະຊາຊົນທີ່ບໍ່ຮູ້ຈັກພຣະເຈົ້າໃຫ້ຄວາມສຳຄັນກັບວັນເຊີດຊູດວງ ອາທິດ, ສ່ວນຄົນທີ່ເປັນຄຣິສຕຽນກໍໃຫ້ຄວາມສຳຄັນກັບວັນນັ້ນເໝືອນກັນ. ຈັກກະພັດຈຶ່ງຢາກໃຫ້ສອງ ກຸ່ມນີ້ທີ່ຂັດແຍ້ງກັນມາເປັນໜຶ່ງດຽວກັນ. ສ່ວນພວກເຈົ້າຄະນະຂອງຄຣິສຕະຈັກທີ່ທະເຍີທະຍານຢາກມີ ອຳນາດ ໄດ້ຊຸກຍູ້ຢູ່ເບື້ອງຫຼັງເພື່ອໃຫ້ມີການອອກຄຳສັ່ງດັ່ງກ່າວ ເພາະເຫັນວ່າຖ້າຄຣິສຕຽນ ແລະ ຄົນ ທີ່ບໍ່ນັບຖືພຣະເຈົ້າສະຫຼອງໃນວັນດຽວກັນ ກໍຈະຊ່ວຍໃຫ້ປະຊາຊົນທົ່ວໄປຍອມຮັບສາສະໜາຄຣິສຫຼາຍ ຂຶ້ນ ເຮັດໃຫ້ຄຣິສຕະຈັກມີອຳນາດ ແລະ ສັກສີເພີ່ມຂຶ້ນກວ່າເກົ່າ. ແຕ່ໃນຂະນະທີ່ຄຣິສຕຽນຫຼາຍຄົນທີ່ ຢຳເກງພຣະເຈົ້າໄດ້ຄ່ອຍ ໆ ຖືກນຳພາໃຫ້ເຂົ້າໃຈຜິດວ່າວັນອາທິດມີຄວາມສັກສິດໃນລະດັບໜຶ່ງ, ພວກເຂົາ ກໍຍັງຮັກສາວັນສະບາໂຕອັນແທ້ຈິງໃຫ້ເປັນວັນບໍຣິສຸດສັກສິດຂອງພຣະເຈົ້າ ເພື່ອເປັນການປະຕິບັດຕາມ ພຣະບັນຍັດຂໍ້ທີສີ່. *{GC 53.1}*

ຊາຕານຮູ້ສຶກວ່າມັນຫຼອກລວງຍັງບໍ່ທັນພໍເທື່ອ ມັນຈຶ່ງຕັ້ງໜ້າຕັ້ງຕາເພື່ອຮວມຄຣິສຕຽນທຸກຄົນ ໃນໂລກພາຍໃຕ້ທຸງຂອງມັນ. ມັນຕັ້ງໃຈໃຊ້ອຳນາດຜ່ານຕົວແທນຂອງມັນຄືສັນຕະປາປາຜູ້ຫຍິ່ງທະນົງ ໂຕ ແລະ ເປັນຜູ້ອວດອ້າງວ່າເປັນຕົວແທນຂອງພຣະຄຣິສ. ຊາຕານດຳເນີນແຜນການນີ້ຈົນສຳເລັດ ຜ່ານສາມພວກຄື ຄົນນອກສາສະໜາທີ່ກັບໃຈແບບເຄິ່ງ ໆ ກາງ ໆ, ຜູ້ນຳຄຣິສຕະຈັກທີ່ທະເຍີທະຍານ ແລະ ຄົນໃນໂບດທີ່ນິຍົມຊົມຊອບສິ່ງຂອງຝ່າຍໂລກ. ມີການຈັດສະພາຄຣິສຕະຈັກຄັ້ງໃຫຍ່ດົນ ໆ ເທື່ອໜຶ່ງ ເຊິ່ງເປັນການຮວມຕົວກັນຂອງເຈົ້າໜ້າທີ່ຄຣິສຕະຈັກຈາກທົ່ວໂລກ ແລະ ເກືອບທຸກຄັ້ງທີ່ ມີການຈັດປະຊຸມສະພາເຫຼົ່ານັ້ນ ກໍຈະມີການລົງມະຕິໃຫ້ລົດຄວາມສຳຄັນຂອງວັນສະບາໂຕລົງຕື່ມ ໃນ ເວລາດຽວກັນກໍມີການເພີ່ມຄວາມສຳຄັນຂອງວັນອາທິດຂຶ້ນອີກ. ໂດຍວິທີດັ່ງກ່າວ, ເທດສະການຂອງ ຄົນທີ່ບໍ່ນັບຖືພຣະເຈົ້າ ຈຶ່ງໄດ້ຮັບການຍົກຍ້ອງວ່າເປັນວັນສຳຄັນຂອງພຣະອົງ ໃນຂະນະທີ່ວັນສະບາໂຕ ຕາມພຣະຄຳພີຖືກຕີຄ່າວ່າເປັນເລື່ອງທີ່ຫຼ້າຫຼັງຂອງສາສະໜາຢິວ ແລະ ຖ້າຜູ້ໃດຍັງຮັກສາວັນສະບາໂຕ ນັ້ນກໍຈະຖືກສາບແຊ່ງ. *{GC 53.2}*

[3] ກົດໝາຍດັ່ງກ່າວຂອງຈັກກະພັດຄອນສະຕັນຕິນ ຖືກປະກາດໃຊ້ໃນວັນທີ 7 ເດືອນ ມີນາ ຄ.ສ. 321 ເຊິ່ງມີເນື້ອຫາດັ່ງ ນີ້: “ຂໍໃຫ້ຜູ້ພິພາກສາທຸກຄົນ ພ້ອມດ້ວຍປະຊາຊົນທັງຫຼາຍໃນເມືອງ ແລະ ຊ່າງຝີມືທັງປວງ ໃຫ້ພັກຜ່ອນໃນວັນອັນໜ້ານັບຖືແຫ່ງ ພຣະອາທິດ. ແຕ່ໃຫ້ຄົນໃນຊົນນະບົດເຮັດການກະເສດຢ່າງເສລີຕໍ່ໄປ; ເພາະວ່າຫຼາຍເທື່ອ, ວັນອາທິດອາດເປັນວັນທີ່ດີທີ່ສຸດໃນການ ຫວ່ານເມັດພືດ ຫຼື ການປູກຕົ້ນອ່ຽນ ແລະ ບໍ່ເປັນການສົມຄວນທີ່ຈະໃຫ້ໂອກາດດັ່ງກ່າວສູນເສຍໄປ ຈົນພາດຈາກພຣະພອນແຫ່ງ ສະຫວັນ.” (ເອ. ເອຊ. ລິວອິສ “ປະຫວັດວັນສະບາໂຕ ແລະ ວັນອາທິດ,” ໜ້າ 123–124).

ຊາຕານຕໍ່ສູ້ກັບພຣະບັນຍັດຂອງພຣະເຈົ້າ

ຊາຕານສຳເລັດໃນການຍົກຕົວເອງຂຶ້ນເໜືອ “ທຸກສິ່ງທີ່ໄດ້ຊື່ວ່າເປັນພຣະ ຫຼື ສິ່ງທີ່ [ມະນຸດ] ໄຫວ້ນະມັດສະການ.” (2 ເທສະໂລນີກ 2:4 THSV). ມັນກ້າປ່ຽນກົດບັນຍັດຂອງພຣະເຈົ້າຂໍ້ດຽວທີ່ເປີດເຜີຍໃຫ້ມະນຸດຮູ້ຈັກພຣະເຈົ້າອົງແທ້ຈິງຜູ້ຊົງພຣະຊົນຢູ່. ພຣະບັນຍັດຂໍ້ທີສີ່ໄດ້ເປີດເຜີຍຢ່າງແຈ່ມແຈ້ງແນ່ນອນໃຫ້ຮູ້ຈັກພຣະຜູ້ສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ ເຮົາຈຶ່ງເຫັນຄວາມແຕກຕ່າງລະຫວ່າງພຣະເຈົ້າອົງແທ້ຈິງກັບພຣະທຽມເທັດທັງຫຼາຍ. ພຣະເຈົ້າຊົງຕັ້ງວັນສະບາໂຕໃຫ້ເປັນອະນຸສອນແຫ່ງການຊົງສ້າງ ຈຶ່ງກຳນົດວັນທີເຈັດໃຫ້ເປັນວັນຢຸດພັກຂອງມວນມະນຸດສະໂລກ ເພື່ອໃຫ້ຄົນທັງຫຼາຍລະນຶກຢູ່ສະເໝີວ່າ ຊີວິດຂອງພວກເຂົາມາຈາກພຣະເຈົ້າ, ພຣະອົງຈຶ່ງສົມຄວນໄດ້ຮັບຄວາມເຄົາລົບຢຳເກງ ແລະ ການຂາບໄຫວ້ນະມັດສະການ. ຊາຕານພະຍາຍາມຫັນຈິດໃຈມະນຸດບໍ່ໃຫ້ພວກເຂົາຈົງຮັກພັກດີຕໍ່ພຣະເຈົ້າ ແລະ ບໍ່ໃຫ້ເຊື່ອຟັງກົດບັນຍັດຂອງພຣະອົງ; ສະນັ້ນ, ມັນຈຶ່ງແນໃສ່ຂໍ້ບັນຍັດທີ່ສອນໃຫ້ຮູ້ຈັກພຣະອົງໃນຖານະພຣະຜູ້ສ້າງນັ້ນເປັນພິເສດ. *{GC 53.3}*

ໃນປັດຈຸບັນຄຣິສຕຽນນິກາຍໂປຣແຕັສຕັງໃຫ້ເຫດຜົນວ່າ ການທີ່ພຣະຄຣິສຊົງຟື້ນຄືນຊີວິດໃນວັນອາທິດນັ້ນ ເຮັດໃຫ້ວັນອາທິດເປັນວັນສະບາໂຕສຳລັບຄຣິສຕຽນ; ແຕ່ບໍ່ມີພຣະຄຳພີຮອງຮັບເອົາຂໍ້ສະຫຼຸບດັ່ງກ່າວ. ພຣະຄຣິສ ຫຼື ພວກອັກຄະສາວົກກໍບໍ່ເຄີຍໃຫ້ຄວາມສຳຄັນກັບວັນນັ້ນ. ການຕັ້ງ ວັນ ອາ ທິດ ເປັນ ວັນ ສຳ ຄັນ ທາງ ສາ ສະ ໜາ ເລີ່ມ ຕົ້ນ ມາ ຈາກ “ອຳ ນາດ ອັນ ເລິ ກ ລັບ ແຫ່ ງ ຄວາ ມ ຊົ ່ ວ ຮ້ າ ຍ” (2 ເທ ສ ະ ໂລ ນີ ກ 2:7) ເຊິ ່ ງ ແມ ່ ນ ແຕ ່ ໃນ ສ ະ ໄໝ ອ າ ຈ ານ ໂປ ໂ ລ ອ ຳ ນ າ ດ ນັ ້ ນ ກ ໍ ເ ລ ີ ່ ມ ປ ະ ຕ ິ ບ ັ ດ ການ ຢ ູ ່ . ແລ ້ ວ ມ ີ ພ ຣ ະ ຄ ຳ ພ ີ ຂ ໍ ້ ໃ ດ ທ ີ ່ ສ ອ ນ ວ ່ າ ອ ົ ງ ພ ຣ ະ ຜ ູ ້ ເ ປ ັ ນ ເ ຈ ົ ້ າ ຊ ົ ງ ຮ ັ ບ ເ ອ ົ າ ວ ັ ນ ອ າ ທ ິ ດ ອ ັ ນ ປ ່ ຽ ບ ເ ໝ ື ອ ນ ລ ູ ກ ຂ ອ ງ ລ ະ ບ ອ ບ ສ ັ ນ ຕ ະ ປ າ ປ າ ? ພ ຣ ະ ອ ົ ງ ຊ ົ ງ ຮ ັ ບ ເ ອ ົ າ ນ ັ ້ ນ ຕ ັ ້ ງ ແ ຕ ່ ເ ມ ື ່ ອ ໃ ດ ? ມ ີ ເ ຫ ດ ຜ ົ ນ ອ ັ ນ ໃ ດ ທ ີ ່ ເ ຊ ື ່ ອ ຖ ື ໄ ດ ້ ວ ່ າ ວ ັ ນ ສ ຳ ຄ ັ ນ ຂ ອ ງ ພ ຣ ະ ເ ຈ ົ ້ າ ຖ ືກ ປ ່ ຽ ນ ໃ ນ ເ ມ ື ່ ອ ບ ໍ ່ ມ ີ ພ ຣ ະ ຄ ຳ ພ ີ ຮ ັ ບ ຮ ອ ງ ? ບ ໍ ່ ມ ີ ເ ລ ີ ຍ . *{GC 54.1}*

ສະໄໝສັນຕະປາປາຮຸ່ງເຮືອງຄືຍຸກມືດຂອງໂລກ

ໃນສະຕະວັດທີ 6 ລະບອບສັນຕະປາປາມີອຳນາດເຕັມຮູບແບບ ແລະ ມີສູນອຳນາດຢູ່ທີ່ນະຄອນໂຣມ, ມີການປະກາດໃຫ້ຜູ້ນຳຄຣິສຕະຈັກໃນນະຄອນໂຣມນັ້ນ ເປັນປະມຸກເໜືອທຸກຄຣິສຕະຈັກ. ລັດທິນອກສາສະໜາໄດ້ປະລາໄຊຕໍ່ລະບອບສັນຕະປາປາ. “ພະຍານາກໄດ້ໃຫ້ຣິດເດດ ແລະ ບັນລັງກັບອຳນາດອັນໃຫຍ່ຫຼວງຂອງຕົນແກ່ສັດຮ້າຍນັ້ນ.” (ພຣະນິມິດ 13:2). ນີ້ຄືການເລີ່ມຕົ້ນຂອງ 1,260 ປີແຫ່ງການກົດຂີ່ຂົ່ມເຫັງຈາກລະບອບສັນຕະປາປາຕາມທີ່ພຣະທຳດານີເອນ ແລະ ພຣະທຳພຣະນິມິດໄດ້ທຳນວາຍໄວ້.[4] ໃນສະໄໝນັ້ນ ຄຣິສຕຽນຖືກບັງຄັບໃຫ້ຕ້ອງເລືອກລະຫວ່າງສອງຝ່າຍ; ຝ່າຍໜຶ່ງໃຫ້ຍອມສະຫຼະຄວາມສັດຊື່ຖິ້ມ ແລະ ຮັບເອົາພິທີກຳພ້ອມກັບຮູບແບບການນະມັດສະການທີ່ສັນຕະປາປາກຳນົດຂຶ້ນ; ສ່ວນອີກຝ່າຍໜຶ່ງຖ້າບໍ່ໄດ້ຖືກປະຫານດ້ວຍເຄື່ອງທໍລະມານ, ການຕັດຄໍ ຫຼື ການເຜົາໄຟຖິ້ມ ກໍຈະຕ້ອງຖືກຂັງໃນຄຸກມືດ. ໃນຄາວນັ້ນ ຄຳຍອຂອງພຣະເຢຊູໄດ້ຮັບຄວາມສຳເລັດທີ່ພຣະອົງຊົງກ່າວວ່າ, “ແມ່ນແຕ່ພໍ່ແມ່, ອ້າຍເອື້ອຍນ້ອງ, ພີ່ນ້ອງ ແລະ ມິດສະຫາຍກໍຈະມອບພວກເຈົ້າໄວ້ ແລະ ຈະໃຫ້ບາງຄົນໃນພວກເຈົ້າຖືກໂທດເຖິງຕາຍ. ທຸກຄົນຈະກຽດຊັງພວກເຈົ້າ ເພາະເຫັນແກ່ນາມຊື່ຂອງເຮົາ.” (ລູກາ 21:16, 17). ການກົດຂີ່ຂົ່ມເຫັງໄດ້ທະວີຄວາມຮຸນແຮງໃສ່ຄົນທີ່ສັດຊື່ ໂລກຈຶ່ງກາຍເປັນສະໜາມຮົບອັນຍິ່ງໃຫຍ່. ຊຸມນຸມຜູ້ເຊື່ອໃນພຣະຄຣິສໄດ້ຫຼົບໄພໃນບ່ອນສອກຫຼີກເປັນເວລາ

[4] ເບິ່ງ ດານີເອນ 7:25; ພຣະນິມິດ 13:5–7. ຫຼັກການສຳຄັນອັນໜຶ່ງຂອງການຕີຄວາມຄຳພະຍາກອນຄື ໜຶ່ງວັນແທ່ງຄຳພະຍາກອນເທົ່າກັບໜຶ່ງປີ ເຊິ່ງຈະເຫັນໄດ້ຈາກພຣະທຳຈົດບັນຊີ 14:34 ແລະ ເອເຊກຽນ 4:6.

ຫຼາຍຮ້ອຍປີ ຕາມທີ່ຜູ້ເຜີຍພຣະທຳໄດ້ກ່າວວ່າ, “ຝ່າຍແມ່ຍິງນັ້ນໄດ້ປົບໜີເຂົ້າໄປອາໄສຢູ່ໃນຖິ່ນແຫ້ງແລ້ງກັນດານ ມາສູ່ບ່ອນທີ່ພຣະເຈົ້າໄດ້ຈັດຫຼຸມໄວ້ໃຫ້ບາງ ເພື່ອວ່ານາງຈະໄດ້ຮັບການລ້ຽງດູຢູ່ທີ່ນັ້ນ ໃນລະຫວ່າງ 1,260 ວັນ.” (ພຣະນິມິດ 12:6). {GC 54.2}

ການຂຶ້ນມີອຳນາດຂອງຄຣິສຕະຈັກແຫ່ງນະຄອນໂຣມ ແມ່ນຈຸດເລີ່ມຕົ້ນຂອງສະໄໝຍຸກມືດ. ຄຣິສ-ຕະຈັກໂຣມຍິ່ງມີອຳນາດຫຼາຍຂຶ້ນເທົ່າໃດ ຄວາມມືດກໍຍິ່ງໜາທຶບລົງເທົ່ານັ້ນ. ແທນທີ່ຄົນຈະເຊື່ອໃນພຣະຄຣິສຜູ້ຊົງເປັນຮາກຖານອັນແທ້ຈິງຂອງຄຣິສຕະຈັກ, ພວກເຂົາມາເຊື່ອໃນສັນຕະປາປາແຫ່ງໂຣມ; ແທນທີ່ຈະໄວ້ວາງໃຈໃນພຣະບຸດຂອງພຣະເຈົ້າເພື່ອຮັບການໃຫ້ອະໄພຄວາມບາບ ແລະ ຮັບເອົາຊີວິດນິຣັນ, ປະຊາຊົນກັບເຊື່ອໃນສັນຕະປາປາ ແລະ ບາດຫຼວງກັບຜູ້ນຳຄຣິສຕະຈັກທີ່ເພິ່ນມອບໝາຍອຳນາດໃຫ້. ພວກເຂົາຖືກສອນວ່າສັນຕະປາປາເປັນຄົນກາງໃນໂລກລະຫວ່າງພຣະເຈົ້າກັບມະນຸດ; ສະນັ້ນ, ບໍ່ມີໃຜສາມາດເຂົ້າເຖິງພຣະເຈົ້າໄດ້ນອກຈາກຈະຜ່ານເພິ່ນ. ຊ້ຳບໍ່ໜຳ, ເພິ່ນຢູ່ໃນຖານະຕົວແທນຂອງພຣະເຈົ້າ ແລະ ຈະຕ້ອງເຊື່ອຟັງຄຳສັ່ງຂອງເພິ່ນຢ່າງເຂັ້ມງວດ. ຖ້າແມ່ນຜູ້ໃດຂັດຄຳສັ່ງຂອງເພິ່ນ ກໍຈະຖືກລົງໂທດຢ່າງໜັກໜ່ວງທັງດ້ານຮ່າງກາຍ ແລະ ດ້ານຈິດວິນຍານ. ຈິດໃຈຂອງປະຊາຊົນຈຶ່ງຖືກຫັນໄປຈາກພຣະເຈົ້າ ໄປນັບຖືມະນຸດທີ່ຜິດພາດ ແລະ ມີນິໄສຮ້າຍກາດ; ຍິ່ງກວ່ານັ້ນ, ເປັນການໃຫ້ກຽດຊາຕານຜູ້ໃຊ້ອຳນາດຢູ່ເບື້ອງຫຼັງຄົນເຫຼົ່ານັ້ນ. ຄວາມບາບຖືກປະດັບປະດາ ແລະ ຕົບແຕ່ງໃຫ້ເບິ່ງເປັນສິ່ງທີ່ຖືກຕ້ອງຕາມຫຼັກສິນລະທຳ. ເມື່ອພຣະຄຳພີຖືກປົກປິດ ແລະ ມີຄົນຖືວ່າຄວາມຄິດເຫັນຂອງຕົນສຳຄັນທີ່ສຸດ ຜົນທີ່ຕາມມາຢ່າງແນ່ນອນແມ່ນການສໍ້ໂກງ, ການຫຼອກລວງ ແລະ ຄວາມບາບທີ່ຕ່ຳຊ້າ. ທຸກຄັ້ງທີ່ມີການຍົກກົດລະບຽບ ແລະ ທຳນຽມຂອງມະນຸດຂຶ້ນແທນກົດບັນຍັດຂອງພຣະເຈົ້າ ກໍໄດ້ເກີດຄວາມເສື່ອມຊາມລົງທັງນັ້ນ. {GC 55.1}

ນັ້ນເປັນຊ່ວງເວລາທີ່ຊຸມນຸມຜູ້ເຊື່ອຂອງພຣະຄຣິສຕ໌ກຢູ່ໃນອັນຕະລາຍ. ມີໜ້ອຍຄົນທີ່ຮັກສາມາດ-ຕະຖານຂອງພຣະເຈົ້າໄວ້ຢ່າງສັດຊື່. ເຖິງແມ່ນວ່າຍັງຄົງມີຄົນເປັນພະຍານເພື່ອຄວາມຈິງຢູ່ຕະຫຼອດເວລາ ແຕ່ບາງຄັ້ງເບິ່ງຄືວ່າຄວາມເທັດ ແລະ ຄວາມງົມງວາຍຈະຊະນະ ຈົນໃນທີ່ສຸດຄວາມເຊື່ອທີ່ແທ້ຈິງຈະຖືກທຳລາຍໄປຈາກໂລກ. ຄົນທັງຫຼາຍພາກັນລືມຂ່າວປະເສີດ ໃນຂະນະທີ່ພິທີກຳທາງສາສະໜາກໍເພີ່ມຂຶ້ນ ຈົນເປັນພາລະສຳລັບປະຊາຊົນທີ່ຈະຮັກສາພິທີກຳເຫຼົ່ານັ້ນ. {GC 55.2}

ປະຊາຊົນບໍ່ພຽງແຕ່ຖືກສອນໃຫ້ເຊື່ອໃນສັນຕະປາປາໃນຖານະຄົນກາງລະຫວ່າງພຣະເຈົ້າກັບມະນຸດ ແຕ່ໃຫ້ເພິ່ງພາບຸນກຸສົນຂອງຕົນເອງເພື່ອທົດແທນຄວາມບາບ. ພວກເຂົາໄດ້ເດີນທາງໄປໄກເພື່ອສະແຫວງບຸນ, ໄດ້ບຳເພັນຕົນເພື່ອລົບລ້າງຄວາມບາບ, ໄດ້ຂາບໄຫວ້ນະມັດສະການວັດຖຸສັກສິດ, ໄດ້ກໍ່ສ້າງໂບດ, ບ່ອນສັກສິດ ແລະ ແທ່ນບູຊາຂຶ້ນ, ໄດ້ຖວາຍເງິນຈຳນວນຫຼວງຫຼາຍໃຫ້ຄຣິສຕະຈັກ ແລະ ໄດ້ເຮັດກິດຈະກຳໃນທຳນອງດຽວກັນອີກຫຼາຍຢ່າງ ເພື່ອລະງັບຄວາມໂກດຮ້າຍຂອງພຣະເຈົ້າ ຫຼື ເພື່ອຈະໄດ້ເປັນທີ່ໂປດປານຂອງພຣະອົງ. ພວກເຂົາເຂົ້າໃຈຜິດວ່າ ພຣະເຈົ້າຄ້າຍຄືມະນຸດທີ່ຈະໂກດຮ້າຍໃນເລື່ອງເລັກນ້ອຍ ຫຼື ຈະຖືກລະງັບອາລົມຮ້າຍດ້ວຍການເຮັດບຸນຖວາຍກຸສົນ. {GC 55.3}

ຄວາມຊົ່ວເພີ່ມຂຶ້ນໄປທົ່ວທຸກບ່ອນ ແມ່ນແຕ່ທ່າມກາງພວກຜູ້ນຳຂອງຄຣິສຕະຈັກໂຣມກໍຍັງເກີດຄວາມຊົ່ວຊ້າຫຼາຍຂຶ້ນຕື່ມ; ແຕ່ເຖິງຢ່າງນັ້ນກໍຕາມ, ອິດທິພົນຂອງຄຣິສຕະຈັກດັ່ງກ່າວຍັງຂະຫຍາຍໂຕຫຼາຍຂຶ້ນຢ່າງຕໍ່ເນື່ອງ. ພໍເຖິງຊ່ວງປະມານປາຍສະຕະວັດທີ 8, ພວກທີ່ຢູ່ຝ່າຍສັນຕະປາປາອ້າງວ່າ ອຳນາດທີ່ຜູ້ນຳຄຣິສຕະຈັກໃນນະຄອນໂຣມມີຢູ່ໃນຂະນະນັ້ນ ກໍເປັນອຳນາດທີ່ເພິ່ນມີມາຕັ້ງແຕ່ສະໄໝຍຸກທຳອິດ. ເພື່ອສົ່ງເສີມຂໍ້ອ້າງດັ່ງກ່າວ ພວກເຂົາຕ້ອງສ້າງຫຼັກຖານສະໜັບສະໜຸນພໍທີ່ຈະເຊື່ອຖືໄດ້, ສ່ວນຜູ້ທີ່ຊຸກຍູ້ຢູ່ເບື້ອງຫຼັງແມ່ນບິດາຂອງການຕົ້ອະທັງໝົດ ກໍຄືມານຊາຕານນັ້ນເອງ. ພວກນັກບວດໄດ້ຂຽນເອກະສານປອມທີ່ອ້າງວ່າມາຈາກສະໄໝບູຮານ. ມີການອ້າງວ່າພວກເຂົາໄດ້ຄົ້ນພົບມະຕິຂອງການ

ປະຊຸມສະພາຄຣິສຕະຈັກ ເຖິງແມ່ນວ່າສະພາຄຣິສຕະຈັກດັ່ງກ່າວບໍ່ປາກົດໃນປະຫວັດສາດ. ເອກະສານປອມ ແລະ ມະຕິປະຊຸມອັນເປັນຄວາມເທັດເຫຼົ່ານັ້ນ ຢືນຢັນວ່າສັນຕະປາປາມີອຳນາດສູງສຸດໃນໂລກ ຕັ້ງແຕ່ສະໄໝເລີ່ມຕົ້ນ. ສ່ວນຄຣິສຕະຈັກທີ່ປະຕິເສດຄວາມຈິງກໍໄດ້ຮັບເອົາການຫຼອກລວງເຫຼົ່ານີ້ໂດຍທັນທີ. *{GC 56.1}*

ສັດຊື່ທ່າມກາງຄວາມມືດມົວ

ມີນາຍຊ່າງທີ່ສັດຊື່ໜ້ອຍຄົນທີ່ກໍ່ສ້າງຢູ່ເທິງຮາກຖານອັນແທ້ຈິງ;[5] ຄົນເຫຼົ່ານີ້ສັບສົນຍ້ອນຄຳສອນທຽມເທັດອັນເປັນດັ່ງກອງຂີ້ເຫຍື້ອທີ່ກີດຂວາງວຽກງານຂອງພວກເຂົາ. ມີບາງຄົນພ້ອມທີ່ຈະຢືມຖ້ອຍຄຳຂອງຄົນທີ່ກໍ່ສ້າງກຳແພງນະຄອນເຢຣູຊາເລັມໃນສະໄໝເນເຫມີຢາມາເວົ້າວ່າ, “ເຫື່ອແຮງພວກເຮົາເກືອບຈະໝົດສິ້ນໄປ ຍ້ອນພາລະໜັກທີ່ພວກເຮົາພວມແບກ ຫີນແຕກຫາມໄປຖິ້ມມີຫຼາຍເຫຼືອລົ້ນ ວັນນີ້ພວກເຮົາຈະສ້າງກຳແພງເມືອງໄດ້ຢ່າງໃດ?” (ເນເຫມີຢາ 4:10). ພວກເຂົາຮູ້ສຶກອິດເມື່ອຍທີ່ຕ້ອງຕໍ່ສູ້ຢູ່ຕະຫຼອດເວລາກັບການຖືກຂົ່ມເຫັງ, ການສໍ້ໂກງ, ຄວາມບາບ ແລະ ສາລະພັດອຸປະສັກທີ່ຊາຕານສາມາດຄິດຄົ້ນເພື່ອຂັດຂວາງຄວາມກ້າວໜ້າ. ບາງຄົນທີ່ເຄີຍສັດຊື່ກໍຮູ້ສຶກທໍ້ຖອຍ, ພວກເຂົາຫັນໄປຈາກຮາກຖານອັນແທ້ຈິງ ເພື່ອແລກກັບຄວາມສະຫງົບສຸກ ແລະ ຄວາມໝັ້ນຄົງດ້ານຊັບສິນ ແລະ ຊີວິດ. ສ່ວນຄົນອື່ນກໍບໍ່ຫວັ່ນໄຫວທີ່ຖືກຝ່າຍສັດຕູຕໍ່ຕ້ານ ແຕ່ກ່າວດ້ວຍຄວາມກ້າຫານວ່າ, “ບໍ່ຕ້ອງຢ້ານພວກສັດຕູດອກ. ຈົ່ງຈົດຈຳໄວ້ວ່າ ອົງພຣະຜູ້ເປັນເຈົ້າຂອງພວກເຮົາຍິ່ງໃຫຍ່ ແລະ ເປັນທີ່ເກງກົວຫຼາຍສ່ຳໃດ.” (ເນເຫມີຢາ 4:14 LO2012). ຄົນເຫຼົ່ານີ້ຈຶ່ງສືບຕໍ່ເຮັດວຽກ ໂດຍທຸກຄົນຄາດດາບຂອງຕົນໄວ້ ກໍຄືພຣະຄຳພີ. (ເອເຟໂຊ 6:17). *{GC 56.2}*

ຄວາມກຽດຊັງ ແລະ ການຕໍ່ຕ້ານຄວາມຈິງອັນດຽວກັນນີ້ໄດ້ຍົວະສັດຕູຂອງພຣະເຈົ້າໃນທຸກຍຸກ, ສ່ວນຜູ້ຮັບໃຊ້ຂອງພຣະເຈົ້າກໍຕ້ອງການຄວາມສັດຊື່ ແລະ ການເຝົ້າລະວັງແບບດຽວກັນໃນທຸກສະໄໝ. ຖ້ອຍຄຳຂອງພຣະຄຣິສທີ່ຊົງກ່າວແກ່ພວກສາວົກລຸ້ນທຳອິດ ຍັງເໝາະສົມກັບຜູ້ຕິດຕາມພຣະອົງຈົນວັນສິ້ນໂລກ. ພຣະອົງຊົງກ່າວວ່າ, “ຖ້ອຍຄຳທີ່ເຮົາໄດ້ກ່າວແກ່ພວກເຈົ້ານີ້ ເຮົາກໍກ່າວເຕືອນແກ່ທຸກຄົນເໝືອນກັນວ່າ ຈົ່ງເຝົ້າລະວັງຢູ່.” (ມາຣະໂກ 13:37). *{GC 56.3}*

ແຕ່ລະມື້ຄວາມມືດນັ້ນກໍໜາຂຶ້ນເລື້ອຍໆ, ການຂາບໄຫວ້ຮູບເຄົາລົບກາຍເປັນເລື່ອງທີ່ຍອມຮັບກັນທົ່ວໄປ ແລະ ມີການຈູດທຽນອະທິຖານຕໍ່ໜ້າຮູບເຄົາລົບເຫຼົ່ານັ້ນ. ປະຊາຊົນຖືກຄອບງຳດ້ວຍທຳນຽມທີ່ງົມງວາຍທີ່ສຸດ ແລະ ບໍ່ມີສາລະ ຈົນເບິ່ງຄືວ່າພວກເຂົາບໍ່ສາມາດຄິດເປັນເຫດເປັນຜົນໄດ້. ເມື່ອພວກບາດຫຼວງ ແລະ ຜູ້ນຳຄຣິສຕະຈັກນິຍົມຄວາມບັນເທີງ, ໃຝ່ຫາການສະໜອງການມ່ວນ ແລະ ມັກສໍ້ໂກງຄົນອື່ນ, ກໍບໍ່ໜ້າແປກໃຈທີ່ປະຊາຊົນຂາດຄວາມຮູ້ ແລະ ໃຊ້ຊີວິດໃນຄວາມບາບອັນຕ່ຳຊ້າ ເພາະມີຜູ້ນຳເຊັ່ນນີ້. *{GC 57.1}*

ອຳນາດຜະເດັດການ

ຂະບວນການຍຶດອຳນາດສຳເລັດອີກຂັ້ນໜຶ່ງໃນສະຕະວັດທີ 11 ເມື່ອສັນຕະປາປາເກຼັກກໍຣີທີ 7 (Pope Gregory VII) ປະກາດຄວາມສົມບູນແບບຂອງຄຣິສຕະຈັກໂຣມ. ໜຶ່ງໃນສິ່ງໃໝ່ທີ່ເພີ່ນນຳເຂົ້າມາຄືການປະກາດວ່າ ໃນເລື່ອງຄຳສອນຂອງພຣະຄຳພີນັ້ນ ຄຣິສຕະຈັກບໍ່ເຄີຍຜິດພາດ ແລະ ຈະຜິດພາດກໍບໍ່ໄດ້. ແຕ່ບໍ່ມີຫຼັກຖານໃນພຣະຄຳພີທີ່ສະໜັບສະໜູນຂໍ້ອ້າງຂອງເພີ່ນ. ສັນຕະປາປາຜູ້ຫຍິ່ງທະນົງໂຕຍັງອ້າງວ່າຕົນມີອຳນາດປົດຈັກກະພັດໄດ້ອີກດ້ວຍ. ນອກຈາກນັ້ນ, ກໍປະກາດວ່າ ຖ້າ

[5] ເບິ່ງ 1 ໂກຣິນໂທ 3:10, 11.

ເພິ່ນຕັດສິນແນວໃດ ກໍບໍ່ມີຜູ້ໃດສາມາດຍົກເລີກໄດ້ ແຕ່ໃນຂະນະດຽວກັນເພິ່ນສາມາດຍົກເລີກຄຳຕັດສິນຂອງຄົນອື່ນໄດ້ໝົດ. {GC 57.2}

ຕົວຢ່າງຂອງການໃຊ້ອຳນາດຢ່າງຜະເດັດການຂອງສັນຕະປາປາເກັກກໍຣີທີ 7 ຜູ້ຮຽກຮ້ອງໃຫ້ຄົນເຊື່ອວ່າສັນຕະປາປາບໍ່ສາມາດເຮັດຜິດໄດ້ນັ້ນ ເຫັນໄດ້ຢ່າງແຈ່ມແຈ້ງຈາກການປະຕິບັດຂອງເພິ່ນຕໍ່ຈັກກະພັດເຢຍລະມັນທີ່ມີຊື່ວ່າ ເຮນຣີທີ 4 (Henry IV). ເມື່ອຈັກກະພັດກ້າຂັດຂືນຕໍ່ອຳນາດຂອງສັນຕະປາປາ, ສັນຕະປາປາຈຶ່ງປະກາດວ່າ ຈັກກະພັດໝົດສະພາບການເປັນສະມາຊິກຄຣິສ-ຕະຈັກ ແລະ ຖືກປົດອອກຈາກຕຳແໜ່ງ. ຍ້ອນພວກເຈົ້າແຂວງ[6] ຂອງຕົນໄດ້ຖອນການສະໜັບສະໜູນ ແລະ ຂົ່ມຂູ່ວ່າຈະກະບົດ ໂດຍມີຄຳປະກາດຂອງສັນຕະປາປາຢູ່ເບື້ອງຫຼັງ, ຈັກກະພັດເຮນຣີຈຶ່ງຕົກໃຈຢ້ານ ແລະ ເຫັນວ່າຈຳເປັນຕ້ອງຄືນດີກັບອຳນາດຂອງໂຣມໃຫ້ໄດ້. ເພິ່ນຈຶ່ງຂ້າມສາຍພູອານເບີ (Alps) ກາງລະດູໜາວພ້ອມດ້ວຍພັນລະຍາ ແລະ ຄົນໃຊ້ທີ່ສັດຊື່. ການເດີນທາງຄັ້ງນີ້ກໍເພື່ອຈະຖ່ອມຕົວລົງຕໍ່ໜ້າສັນຕະປາປາ. ພໍຈັກກະພັດເຮນຣີໄປເຖິງຫໍຜາສາດຫີນທີ່ສັນຕະປາປາເກັກກໍຣີພັກຢູ່ນັ້ນ ກໍມີຄົນພາເພິ່ນໄປທີ່ເດີນຊັ້ນນອກ ໂດຍບໍ່ມີຍາມຂອງເພິ່ນເຝົ້າອາລັກຂາ. ເພິ່ນໃສ່ເສື້ອຜ້າເກົ່າໆ ຢືນຢູ່ຂ້າງນອກໃນຄວາມໜາວເຫັບແຫ່ງລະດູໜາວໂດຍບໍ່ໃສ່ໝວກ ແລະ ບໍ່ໃສ່ເກີບ ລໍຖ້າໃຫ້ສັນຕະປາປາອະນຸຍາດໃຫ້ເພິ່ນເຂົ້າພົບ. ເພິ່ນຕ້ອງອົດອາຫານສາລະພາບຄວາມຜິດຕໍ່ເບື້ອງສາມັນ ສັນຕະປາປາຈຶ່ງຍອມໂຜດໃຫ້ອະໄພ. ແຕ່ການໃຫ້ອະໄພນັ້ນມີເງື່ອນໄຂວ່າ ຈັກກະພັດຈະບໍ່ສາມາດສືບຕໍ່ຕຳແໜ່ງໄດ້ ຈົນກວ່າຈະໄດ້ຮັບອະນຸຍາດຈາກສັນຕະປາປາ. ສັນຕະປາປາເກັກກໍຣີພູມໃຈກັບໄຊຊະນະນີ້ ຈຶ່ງໂອ້ອວດວ່າເປັນໜ້າທີ່ຂອງເພິ່ນທີ່ຈະປາບຄວາມຫຍິ່ງທະນົງຂອງກະສັດທັງຫຼາຍລົງ. {GC 57.3}

ຄວາມຫຍິ່ງຍະໂສຂອງສັນຕະປາປາແຕກຕ່າງກັນຫຼາຍກັບຄວາມອ່ອນສຸພາບຂອງພຣະຄຣິສຜູ້ຊົງຢືນເຄາะຢູ່ທີ່ປະຕູຫົວໃຈ ລໍຖ້າໃຫ້ມີການເປີດປະຕູກ່ອນທີ່ພຣະອົງຈະເຂົ້າມາເພື່ອໃຫ້ອະໄພ ແລະ ນຳສັນຕິສຸກມາໃຫ້, ຄືພຣະອົງທີ່ຊົງສອນສາວົກຂອງພຣະອົງວ່າ “ຖ້າຜູ້ໃດໃນພວກເຈົ້າຢາກເປັນເອກ ລາວຕ້ອງເປັນຜູ້ຮັບໃຊ້ຂອງພວກເຈົ້າ.” (ມັດທາຍ 20:27). {GC 58.1}

ຄຳສອນເທັດ

ໃນແຕ່ລະສະຕະວັດທີ່ຜ່ານໄປ ຄຳສອນທຽມເທັດຂອງຄຣິສຕະຈັກໂຣມກໍເພີ່ມຂຶ້ນຢ່າງຕໍ່ເນື່ອງ. ແມ່ນແຕ່ໃນຍຸກກ່ອນລະບອບສັນຕະປາປາ ຄົນໃນຄຣິສຕະຈັກໄດ້ໃສ່ໃຈ ແລະ ໄດ້ຮັບອິດທິພົນຈາກຄຳສອນຂອງນັກປັດຊະຍາຝ່າຍໂລກ. ຫຼາຍຄົນທີ່ອ້າງວ່າກັບໃຈແລ້ວ ກໍຍັງຍຶດຖືຫຼັກປັດຊະຍາຂອງສາສະໜາເດີມທີ່ຕົນເຄີຍນັບຖື ແລະ ບໍ່ພຽງແຕ່ສຶກສາປັດຊະຍາເດີມນັ້ນຕໍ່ ແຕ່ຍັງຊຸກຍູ້ໃຫ້ຄົນໃນຄຣິສຕະຈັກຮັບປັດຊະຍານັ້ນ ໂດຍອ້າງວ່າຈະຊ່ວຍໃນການປະກາດໃຫ້ກັບຊາວໂລກ. ຄຳສອນຜິດອັນຮ້າຍແຮງຈຶ່ງປະສົມເຂົ້າມາໃນຄຳສອນຂອງຄຣິສຕະຈັກ. ອັນດັບໜຶ່ງໃນຄຳສອນທີ່ຜິດນັ້ນແມ່ນຄວາມເຊື່ອທີ່ວ່າມະນຸດມີດວງວິນຍານທີ່ບໍ່ຮູ້ດັບ, ແລະເມື່ອຄົນຕາຍ ດວງວິນຍານນັ້ນຍັງມີຄວາມຮູ້ສຶກນຶກຄິດ. ຫຼັກຂໍ້ເຊື່ອຜິດດັ່ງກ່າວ ໄດ້ປູພື້ນໃຫ້ຄຣິສຕະຈັກໂຣມສອນໃຫ້ອະທິຖານຕໍ່ນັກບຸນທີ່ຕາຍໄປແລ້ວ ແລະ ໃຫ້ບູຊານຳມາຮີ. ຈາກຄວາມເຂົ້າໃຈຜິດໃນເລື່ອງດວງວິນຍານນັ້ນ ກໍນຳໄປສູ່ຄຳສອນຜິດເລື່ອງນະຣົກ ເຊິ່ງສອນ

[6] ໃນອານາຈັກເຢຍລະມັນສະໄໝນັ້ນ, ຄຳວ່າ: “ເຈົ້າແຂວງ” ບໍ່ໄດ້ໝາຍເຖິງເຈົ້າໜ້າທີ່ທີ່ລັດຖະບານກາງແຕ່ງຕັ້ງຂຶ້ນ. ແຂວງແຕ່ລະແຫ່ງແມ່ນລັດໜຶ່ງທີ່ຜູ້ປົກຄອງໄດ້ຮັບຕຳແໜ່ງສືບທອດຕາມສາຍເລືອດ ແລະ ປົກຄອງດ້ວຍສິດອຳນາດຂອງຕົນເອງ. ສ່ວນຈັກກະພັດກໍບໍ່ໄດ້ຮັບຕຳແໜ່ງໂດຍການສືບທອດ ຫາກແຕ່ໄດ້ຮັບເລືອກຈາກເຈົ້າແຂວງຈຳນວນໜຶ່ງເທົ່ານັ້ນ. ດ້ວຍເຫດນີ້, ການທີ່ພວກເຈົ້າແຂວງຖອນການສະໜັບສະໜູນຈຶ່ງເປັນໄພຂົ່ມຂູ່ຕໍ່ບັນລັງຂອງຈັກກະພັດເຮນຣີເອງ.

ວ່າ ຄົນທີ່ຕາຍໄປໂດຍບໍ່ຍອມກັບໃຈຈະຕ້ອງຖືກເຜົາໄໝ້ຢູ່ຕະຫຼອດນິຣັນ. ເລື່ອງນີ້ຖືກນຳເຂົ້າມາເປັນ ຄຳສອນຂອງຄຣິສຕະຈັກໂຣມຕັ້ງແຕ່ເລີ່ມຕົ້ນ. *{GC 58.2}*

ແລ້ວຈາກຄຳສອນຜິດເລື່ອງນະຣົກກໍມີການນຳເລື່ອງໃໝ່ເຂົ້າມາອີກ ກໍຄືເລື່ອງແດນຊຳລະເຊິ່ງ ຄຣິສຕະຈັກໂຣມໄດ້ຮັບຈາກລັດທິນອກສາສະໜາ. ຄຳສອນນີ້ອ້າງວ່າ ແດນຊຳລະແມ່ນພົບພູມສຳລັບ ທໍລະມານດວງວິນຍານຂອງຄົນທີ່ບໍ່ມີໂທດຕົກນະຣົກຕະຫຼອດໄປ. ພວກເຂົາສອນວ່າເມື່ອຄວາມບາບ ໄດ້ຖືກຊົດໃຊ້ໃນແດນຊຳລະແລ້ວ ດວງວິນຍານຂອງຜູ້ນັ້ນກໍຈະໄດ້ຂຶ້ນສະຫວັນ. ຄຣິສຕະຈັກໂຣມໄດ້ໃຊ້ ຄຳສອນນີ້ເພື່ອໃຫ້ປະຊາຊົນຜູ້ງົມງວາຍຕົກໃຈຢ້ານ. *{GC 58.3}*

ຍັງມີອີກເລື່ອງໜຶ່ງທີ່ຄຣິສຕະຈັກໂຣມປັ້ນຂຶ້ນ ທີ່ເຮັດໃຫ້ພວກເຂົາໄດ້ຮັບປະໂຫຍດຈາກຄວາມ ຢ້ານກົວ ແລະ ຄວາມບາບຂອງສະມາຊິກ ນັ້ນແມ່ນຄຳສອນເລື່ອງໃບລ້າງບາບ. ພວກເຂົາສອນວ່າ ຖ້າ ຜູ້ໃດສະໝັກເປັນທະຫານຕໍ່ສູ້ໃນສົງຄາມເພື່ອຊ່ວຍຂະຫຍາຍອານາຈັກຂອງສັນຕະປາປາ ຫຼື ເພື່ອລົງໂທດ ສັດຕູຂອງເພິ່ນ ຫຼື ທຳລາຍລ້າງຜູ້ທີ່ກ້າປະຕິເສດວ່າເພິ່ນມີອຳນາດສູງສຸດດ້ານຈິດວິນຍານ, ຜູ້ນັ້ນຈະ ໄດ້ຮັບການຍົກໂທດຄວາມບາບທັງໝົດ ຄືທັງບາບທີ່ເຄີຍເຮັດມາ, ບາບທີ່ພວມເຮັດຢູ່ ແລະ ບາບ ທີ່ຈະເຮັດໃນອະນາຄົດຕໍ່ໜ້າ ພ້ອມທັງໄດ້ຮັບການປົດປ່ອຍຈາກຄວາມທຸກທໍລະມານ ແລະ ໂທດ ທັງໝົດທີ່ຕົນຕິດຄ້າງຢູ່. ນອກຈາກນັ້ນ, ກໍມີການສອນປະຊາຊົນວ່າ ພວກເຂົາສາມາດຊົດໃຊ້ຄວາມ ບາບຂອງຕົນເອງ ແລະ ກູ້ດວງວິນຍານຂອງຍາດຕິພີ່ນ້ອງທີ່ກຳລັງຖືກເຜົາໄຟຢ່າງທໍລະມານໃນ ແດນຊຳລະ ດ້ວຍການຖວາຍເງິນເຂົ້າມາໃນຄຣິສຕະຈັກ. ໂດຍວິທີດັ່ງກ່າວ ຈຶ່ງມີເງິນໄຫຼເຂົ້າມາໃນຄັງ ຂອງຄຣິສຕະຈັກໂຣມຢ່າງເຕັມລົ້ນ ເພື່ອຫຼໍ່ລ້ຽງຄວາມໂອ່ອ່າຫຼູຫຼາ ແລະ ຊີວິດແຫ່ງຄວາມບາບຂອງຄົນ ທີ່ອ້າງວ່າເປັນຕົວແທນຂອງພຣະຄຣິສ ແຕ່ຕອນທີ່ພຣະຄຣິສຢູ່ໃນໂລກພຣະອົງຍັງບໍ່ມີບ່ອນທີ່ຈະຊຸກຫົວ ນອນ. *{GC 59.1}*

ພິທີການລະນຶກເຖິງຄາບອາຫານສຸດທ້າຍຂອງພຣະຄຣິສຖືກປ່ຽນເປັນສົນບູຊາທີ່ຫວັງຜົນບຸນ. ພວກ ບາດຫຼວງອ້າງວ່າຄາຖາທີ່ຕົນທ່ອງນັ້ນໄດ້ປ່ຽນເຂົ້າຈີ່ ແລະ ເຫຼົ້າແວງໃຫ້ກາຍເປັນ “ພຣະກາຍ ແລະ ພຣະໂລຫິດຂອງພຣະຄຣິສ.”[7] ຄົນເຫຼົ່ານີ້ໝິ່ນປະໝາດຢ່າງໜ້າດ້ານວ່າ ພວກເຂົາມີອຳນາດທີ່ຈະ ສ້າງພຣະຜູ້ສ້າງຂອງສັບພະທຸກສິ່ງ. ຄຣິສຕຽນຖືກບັງຄັບໃຫ້ປະກາດວ່າ ຕົນເອງເຊື່ອໃນຄຳສອນທີ່ ໝິ່ນປະໝາດສະຫວັນດັ່ງກ່າວ ແລະ ຖ້າບໍ່ເຮັດກໍຈະຖືກປະຫານຊີວິດ. ມີຜູ້ເຊື່ອຈຳນວນມະຫາສານທີ່ ຖືກປະຫານຊີວິດໂດຍການເຜົາໄຟຍ້ອນວ່າບໍ່ຍອມຮັບເລື່ອງນີ້. *{GC 59.2}*

ໃນສະຕະວັດທີ 13 ມີການຕັ້ງສານຄະດີນອກຮີດເຊິ່ງເປັນສະຖາບັນທີ່ໜ້າຢ້ານທີ່ສຸດໃນລະບອບ ສັນຕະປາປາ. ພວກຜູ້ນຳຮ່ວມມືກັບມານຊາຕານຜູ້ເປັນເຈົ້າແຫ່ງຄວາມມືດ. ຊາຕານ ແລະ ພວກ ທູດຂອງມັນຈົ່ງຄອບງຳຈິດໃຈຂອງພວກເຂົາໃນຂະນະທີ່ປະຊຸມກັນເພື່ອສອບສວນຢ່າງລັບ ໆ. ໃນເວລາ ດຽວກັນມີທູດຂອງພຣະເຈົ້າທີ່ບໍ່ປາກົດໃຫ້ເຫັນ ແຕ່ຢືນຢູ່ທ່າມກາງທີ່ປະຊຸມເຫຼົ່ານັ້ນ ເພື່ອຂຽນຄຳປະກາດ ອັນເປັນບາບຂອງພວກເຂົາ ແລະ ຈົດບັນທຶກປະຫວັດສາດອັນຮ້າຍແຮງເກີນກວ່າຕາມະນຸດຈະທົນ ເບິ່ງໄດ້. ຄາວນັ້ນກໍເປັນໄປຕາມຄຳພະຍາກອນທີ່ວ່າ, “ບາບີໂລນມະຫານະຄອນ . . . ເມົາດ້ວຍເລືອດ ໄພ່ພົນຂອງພຣະເຈົ້າ.” (ພຣະນິມິດ 17:5–6). ຊາກສົບທີ່ຖືກບົດບີ້ຂອງຄົນນັບລ້ານເຊິ່ງຖືກຂ້າຍ້ອນ ຄວາມເຊື່ອ ເປັນດັ່ງສຽງທີ່ຮ້ອງທູນຕໍ່ພຣະເຈົ້າ ຂໍໃຫ້ແກ້ແຄ້ນອຳນາດທຽມເທັດນີ້. *{GC 59.3}*

---

[7] ພຣະຄາດີນັນ ໄວສ໌ແມນ (Cardinal Wiseman), ຈາກຄຳເທດສະໜາຄັ້ງທີ 8, ໝວດ 3, ວັກ 26 ເລື່ອງ: *ພິສູດແລ້ວຈາກ ພຣະຄຳພີວ່າ ເລືອດເນື້ອຂອງພຣະຄຣິສປາກົດຢູ່ຈິງໃນພິທີສົນມະຫາສະໜິດ.*

ຜົນຂອງການປະຕິເສດພຣະຄຳ

ລະບອບສັນຕະປາປາກາຍເປັນຈອມຜະເດັດການແຫ່ງໂລກ. ກະສັດ ແລະ ຈັກກະພັດກົ້ມກາບຕໍ່ຄຳສັ່ງຂອງເພິ່ນ. ເບິ່ງຄືຊະຕາກຳຂອງມະນຸດທັ້ງໃນຊີວິດນີ້ ແລະ ຊີວິດໜ້າຢູ່ໃນການຄວບຄຸມຂອງເພິ່ນ. ຄົນທັ້ງຫຼາຍໄດ້ຮັບເອົາຄຳສັ່ງສອນຂອງຄຣິສຕະຈັກໂຣມເປັນເວລາຫຼາຍຮ້ອຍປີ, ໄດ້ເຮັດຕາມພິທີກຳ ແລະ ມີການສະຫຼອງເທດສະການຂອງໂຣມໂດຍທົ່ວໄປ. ໃນສະໄໝນັ້ນພວກບາດຫຼວງຂອງຄຣິສຕະຈັກໂຣມໄດ້ຮັບກຽດ ແລະ ມີສະຫວັດດີການດີ. ຕັ້ງແຕ່ນັ້ນມາ ຄຣິສຕະຈັກດັ່ງກ່າວບໍ່ເຄີຍໄດ້ຮັບກຽດ ແລະ ບໍ່ເຄີຍຮຸ່ງເຮືອງ ຫຼື ມີອຳນາດຫຼາຍໄປກວ່າສະໄໝນັ້ນອີກ. *{GC 60.1}*

ແຕ່ວ່າ “ເວລາທ່ຽງວັນຂອງລະບອບສັນຕະປາປາແມ່ນທ່ຽງຄືນຂອງໂລກ.”[8] ບໍ່ວ່າປະຊາຊົນ ຫຼື ພວກບາດຫຼວງ, ເກືອບບໍ່ມີໃຜຮູ້ຈັກພຣະຄຳພີ. ພວກຜູ້ນຳໃນລະບອບສັນຕະປາປາເໝືອນພວກຟາຣີຊາຍໃນສະໄໝພຣະຄຣິດ ທີ່ກຽດຄວາມສະຫວ່າງເພາະຢ້ານວ່າຈະເປີດເຜີຍຄວາມບາບຂອງຕົນ. ພຣະບັນຍັດຂອງພຣະເຈົ້າເປັນມາດຕະຖານແຫ່ງຄວາມຊອບທຳ, ແລະເມື່ອເອົາກົດບັນຍັດນັ້ນໄປຖິ້ມແລ້ວ ພວກເຂົາຈຶ່ງໃຊ້ອຳນາດໂດຍບໍ່ຈຳກັດ ແລະ ເຮັດຄວາມຊົ່ວໂດຍບໍ່ຢັບຢັ້ງໃຈ. ການສໍ້ໂກງ, ຄວາມເຫັນແກ່ໄດ້ ແລະ ຄວາມມືດເມົ້າເສເພເກີດຂຶ້ນທົ່ວໄປ. ມະນຸດກ້າເຮັດອາດຊະຍາກຳທຸກຢ່າງເພື່ອໄດ້ເງິນ ຫຼື ຕຳແໜ່ງ. ຕຳນັກຂອງສັນຕະປາປາ ແລະ ຜາສາດຂອງຜູ້ນຳຊັ້ນສູງຂອງຄຣິສຕະຈັກ ເປັນບ່ອນເຮັດບາບອັນຕ່ຳຊ້າເສື່ອມຊາມ. ສັນຕະປາປາບາງອົງເຮັດຄວາມຜິດອັນເປັນຕາໜ່າຍຫຼາຍ ຈົນເຈົ້າໜ້າທີ່ຝ່າຍການປົກຄອງພະຍາຍາມປົດອອກຈາກຕຳແໜ່ງ ເພາະຖືວ່າເປັນຜີສາດຮ້າຍທີ່ຕ່ຳຊ້າເກີນໄປທີ່ຈະຍອມຮັບໄດ້. ທົ່ວທະວີບເອີຣົບບໍ່ມີການພັດທະນາດ້ານການສຶກສາ, ສິລະປະ ຫຼື ຄວາມສີວິໄລເປັນເວລາຫຼາຍຮ້ອຍປີ. ປະເທດທັງຫຼາຍທີ່ນັບຖືສາສະໜາຄຣິສກາຍເປັນອຳມະພາດດ້ານສິນລະທຳ ແລະ ດ້ານສະຕິປັນຍາ. *{GC 60.2}*

ສະພາບຂອງໂລກພາຍໃຕ້ອຳນາດຂອງຄຣິສຕະຈັກໂຣມນັ້ນ ເປັນໄປຕາມຖ້ອຍຄຳຂອງຜູ້ເຜີຍພຣະທຳໂຮເສອາຢ່າງໜ້າຫົດໜູ່. ເພິ່ນກ່າວວ່າ, “ປະຊາກອນຂອງເຮົາຖືກທຳລາຍເພາະຂາດຄວາມຮູ້ ເພາະເຈົ້າປະຕິເສດບໍ່ຮັບຄວາມຮູ້ ເຮົາກໍປະຕິເສດເຈົ້າ . . . ເພາະເຈົ້າຫຼົງລືມພຣະບັນຍັດແຫ່ງພຣະເຈົ້າຂອງເຈົ້າ ເຮົາກໍລືມພົງພັນຂອງເຈົ້າເສຍດ້ວຍ.” “ຄວາມສັດຊື່ ຫຼື ຄວາມຮັກບໍ່ມີຢູ່ໃນດິນແດນນີ້ ແລະ ບໍ່ມີຄວາມຮັບຮູ້ພຣະເຈົ້າ. ພວກເຂົາເຮັດຄຳສັນຍາ ແລະ ລະເມີດຄຳສັນຍານັ້ນ, ພວກເຂົາຂີ້ຕົວະ, ເປັນຄາຕະກອນ, ຂີ້ລັກ ແລະ ຫຼິ້ນຊູ້ສູ່ຜົວເມຍຄົນອື່ນ. ອາດຊະຍາກຳມີເພີ່ມຂຶ້ນ ແລະ ການຂ້າຟັນກັນກໍມີຢູ່ທຸກມື້ທຸກວັນ.” (ໂຮເສອາ 4:6 ດັດແປງຈາກສະບັບ TH1971; 4:1, 2). ນັ້ນແມ່ນຜົນຂອງການປົກປິດພຣະຄຳຂອງພຣະເຈົ້າ. *{GC 60.3}*

[8] ເຈ. ເອ. ໄວລີ (J. A. Wylie), *ປະຫວັດນິກາຍໂປຣແຕັສຕັງ*, ເຫຼັ້ມ. 1, ບົດ. 4.

4

ຊາວໂວດົວ

ວິລະຊົນແຫ່ງຄວາມເຊື່ອ

ທ່າມກາງຄວາມມືດມົວທີ່ປົກຄຸມໂລກຕະຫຼອດເວລາອັນດົນນານທີ່ສັນຕະປາປາເຮືອງອຳນາດນັ້ນ ແສງສະຫວ່າງແຫ່ງຄວາມຈິງບໍ່ສາມາດຖືກດັບມອດທັງໝົດໄດ້. ໃນທຸກຍຸກທຸກສະໄໝມີຄົນເປັນພະຍານເພື່ອພຣະເຈົ້າ ຄືຄົນທີ່ເຊື່ອວ່າພຣະຄຣິສຊົງເປັນຄົນກາງແຕ່ຜູ້ດຽວລະຫວ່າງພຣະເຈົ້າກັບມະນຸດ ແລະ ເຊື່ອວ່າພຣະຄຳພີແມ່ນບັນທັດຖານດຽວແຫ່ງການດຳລົງຊີວິດ; ຄົນເຫຼົ່ານີ້ຮັກສາວັນສະບາໂຕທີ່ແທ້ຈິງ ໃຫ້ເປັນວັນບໍຣິສຸດສັກສິດ. ຄົນລຸ້ນຫຼັງບໍ່ເຄີຍຮູ້ເລີຍວ່າ ພວກເຂົາເປັນໜີ້ບຸນຄຸນຄົນເຫຼົ່ານີ້ຫຼາຍສ່ຳໃດ. ພວກເຂົາຖືກກ່າວຫາວ່າເປັນຄົນນອກຮີດ ແລະ ຖືກໃສ່ຮ້າຍປ້າຍສີ. ສຳລັບງານຂຽນຂອງພວກເຂົາ ສ່ວນໜຶ່ງກໍຖືກປົກປິດ, ສ່ວນໜຶ່ງກໍຖືກບິດເບືອນ ແລະ ສ່ວນໜຶ່ງກໍຖືກທຳລາຍ. ແຕ່ເຖິງຢ່າງນັ້ນກໍຕາມ, ຍັງມີຄົນຢືນຢັດ ແລະ ຮັກສາຄວາມເຊື່ອໃຫ້ບໍຣິສຸດໃນຍຸກສະໄໝຕ່າງ ໆ ຢ່າງຕໍ່ເນື່ອງ ເພື່ອເປັນມໍລະດົກອັນສັກສິດແກ່ຄົນລຸ້ນຫຼັງ. *{GC 61.1}*

ປະຫວັດຄົນຂອງພຣະເຈົ້າໃນສະໄໝຍຸກມືດ ເມື່ອຄຣິສຕະຈັກໂຣມເຮືອງອຳນາດນັ້ນ ໄດ້ຖືກບັນທຶກໄວ້ໃນສະຫວັນ ແຕ່ບໍ່ຄ່ອຍໄດ້ຮັບການບັນທຶກໄວ້ໃນປຶ້ມປະຫວັດສາດຂອງມະນຸດ. ຮ່ອງຮອຍຂອງຄົນເຫຼົ່ານີ້ຍາກທີ່ຈະຄົ້ນພົບ ຍົກເວັ້ນໃນຄຳກ່າວຫາຂອງຄົນທີ່ຂົ່ມເຫັງພວກເຂົາ. ຄຣິສຕະຈັກໂຣມມີນະໂຍບາຍໃຫ້ທຳລາຍຮ່ອງຮອຍຂອງການຂັດແຍ້ງຕໍ່ຄຳສອນ ແລະ ການຝ່າຝືນຕໍ່ຄຳສັ່ງຂອງພວກເຂົາໃຫ້ໝົດສິ້ນ. ຄຣິສຕະຈັກໂຣມພະຍາຍາມທຳລາຍງານຂຽນທຸກຢ່າງ ແລະ ທຸກຄົນທີ່ພວກເຂົາຖືວ່ານອກຮີດ. ຜູ້ໃດຍົກຂໍ້ສົງໄສມາເວົ້າ ຫຼື ສະແດງຄວາມບໍ່ເຊື່ອໝັ້ນວ່າຄຳສອນຂອງສັນຕະປາປາມີຄວາມສັກສິດ ກຳພຽງພໍທີ່ຈະຖືກປະຫານຊີວິດ ບໍ່ວ່າຈະເປັນຄົນຮັ່ງມີ ຫຼື ຍາກຈົນ, ເປັນຄົນຊັ້ນສູງ ຫຼື ຊັ້ນຕ່ຳ ກໍຕາມ. ຄຣິສຕະຈັກໂຣມພະຍາຍາມທຳລາຍປະຫວັດຄວາມໂຫດຮ້າຍທີ່ພວກເຂົາເຮັດຕໍ່ຜູ້ທີ່ຄັດຄ້ານບໍ່ເຫັນດີນຳພວກເຂົາ. ສະພາໃຫຍ່ຂອງສັນຕະປາປາປະກາດວ່າ ໜັງສື ແລະ ງານຂຽນທີ່ບັນທຶກເລື່ອງເຊັ່ນນີ້ກໍຕ້ອງໄດ້ຖືກເຜົາຖິ້ມ. ສະໄໝກ່ອນທີ່ຈະມີການຕີພິມ ມີໜັງສືໜ້ອຍ ແລະ ໜັງສືທີ່ມີຢູ່ນັ້ນຢູ່ໃນຮູບແບບທີ່ເກັບຮັກສາໄດ້ຍາກ; ສະນັ້ນ, ຄົນທີ່ນິຍົມສັນຕະປາປາຈຶ່ງດຳເນີນແຜນການທຳລາຍຂອງພວກເຂົາໄດ້ງ່າຍ. *{GC 61.2}*

ອຳນາດຂອງຄຣິສຕະຈັກໂຣມຖືກປະຕິເສດ

ບໍ່ມີຄຣິສຕະຈັກທ້ອງຖິ່ນແຫ່ງໃດພາຍໃນອານາເຂດການປົກຄອງຂອງຄຣິສຕະຈັກໂຣມຖືກປ່ອຍໃຫ້ມີສິດທິເສລີພາບໃນການນັບຖືສາສະໜາໄດ້ດົນ. ແຕ່ພໍສັນຕະປາປາມີອຳນາດໃນຂົງເຂດໃດ ເພິ່ນກໍລົງມື

ປາບປາມທຸກຄົນທີ່ບໍ່ຍອມຮັບການປົກຄອງຂອງຄຣິສຕະຈັກໂຣມ. ສະນັ້ນ, ຄຣິສຕະຈັກທ້ອງຖິ່ນຕ່າງ ໆ ຈຶ່ງພາກັນຍອມຕໍ່ອຳນາດຂອງສັນຕະປາປາໃນແຕ່ລະບ່ອນ. {GC 62.1}

ໃນເກາະອັງກິດ ມີການນັບຖືສາສະໜາຄຣິສຕາມຮູບແບບຂອງພວກອັກຄະສາວົກ ຕັ້ງແຕ່ສະຕະວັດຕົ້ນ ໆ ແຫ່ງຄຣິສຕະການ. ຂ່າວປະເສີດທີ່ພວກເຂົາໄດ້ຮັບນັ້ນປາສະຈາກຄຳສອນທຽມເທັດຂອງຄຣິສ-ຕະຈັກໂຣມ. ເຖິງແມ່ນວ່າພວກເຂົາຢູ່ຫ່າງໄກກໍຕາມ, ການຂົ່ມເຫັງຈາກພວກຈັກກະພັດໂຣມທີ່ບໍ່ນັບຖືພຣະເຈົ້າເປັນຂອງຂວັນດຽວທີ່ຄຣິສຕະຈັກລຸ້ນທຳອິດແຫ່ງເກາະອັງກິດໄດ້ຮັບຈາກໂຣມ. ມີຄຣິສຕຽນຫຼາຍຄົນໜີການຂົ່ມເຫັງໃນອັງກິດໄປລີ້ໄພໃນສະກັອດແລນ ແລະ ຈາກທີ່ນັ້ນກໍມີຄົນນຳຄວາມຈິງໄປຍັງເກາະໄອແລນ. ຄົນໃນດິນແດນເຫຼົ່ານັ້ນກໍຮັບເອົາຄວາມຈິງດ້ວຍຄວາມຍິນດີ. {GC 62.2}

ຊົນເຜົ່າແຊັກຊັນ (Saxon) ທີ່ນັບຖືຜີສາງນາງໄມ້ໄດ້ເຂົ້າມາບຸກຢຶດເກາະອັງກິດ, ເມື່ອພວກເຂົາຂຶ້ນຄອງອຳນາດກໍຮູ້ສຶກວ່າຈະເປັນການລົດຕົວເອງເກີນໄປທີ່ຈະຟັງພວກຄຣິສຕຽນທີ່ຕົກເປັນທາດ. ພວກຄຣິສຕຽນຈຶ່ງຈຳເປັນຕ້ອງຫຼົບໜີໄປລີ້ຢູ່ຕາມຫ້ວຍໜອງຄອງບຶງ ແລະ ຕາມພູຜາ. ເຖິງແມ່ນວ່າຄວາມສະຫວ່າງຈະຖືກບົດບັງໄວ້ໄລຍະເວລາໜຶ່ງ ແຕ່ມັນກໍບໍ່ໄດ້ດັບມອດໄປ. ຮ້ອຍປີຕໍ່ມາໃນປະເທດສະກັອດແລນ, ຄວາມສະຫວ່າງນັ້ນກໍສ່ອງແຈ້ງຈົນເຖິງດິນແດນທີ່ຢູ່ຫ່າງໄກ. ໃນປະເທດໄອແລນກໍມີຄົນຊື່ໂຄລຳບາ (Columba) ທີ່ມີຄວາມເຊື່ອຫຼາຍພ້ອມກັບຄົນທີ່ຮ່ວມງານກັບເພິ່ນ; ຄົນເຫຼົ່ານີ້ໄດ້ໄປທີ່ເກາະເປົ່າປ່ຽວແຫ່ງໜຶ່ງຊື່ວ່າເກາະໄອໂອນາ (Iona) ເພື່ອຮວບຮວມຜີນ້ອງຜູ້ເຊື່ອ ແລະ ຕັ້ງສູນຝຶກນັກປະກາດຂ່າວປະເສີດ. ໃນທ່າມກາງນັກປະກາດເຫຼົ່ານັ້ນມີຄົນໜຶ່ງທີ່ຮັກສາວັນສະບາໂຕ; ສະນັ້ນ, ຄົນທັງຫຼາຍໃນລະແວກນັ້ນຈຶ່ງໄດ້ຮັບຮູ້ຄວາມຈິງໃນເລື່ອງນີ້. ສູນຝຶກນັກປະກາດທີ່ເກາະໄອໂອນານັ້ນໄດ້ສົ່ງນັກປະກາດອອກໄປຫຼາຍປະເທດ ບໍ່ພຽງແຕ່ປະເທດສະກັອດແລນ ແລະ ອັງກິດ ແຕ່ຮວມໄປເຖິງເຢຍລະມັນ, ສວິສເຊີແລນ ໄປຈົນຮອດອີຕາລີ. {GC 62.3}

ແຕ່ຄຣິສຕະຈັກໂຣມໄດ້ຈັບຕາຈ້ອງເບິ່ງເກາະອັງກິດດ້ວຍຄວາມຕັ້ງໃຈວ່າ ຈະຕ້ອງນຳມາຢູ່ພາຍໃຕ້ອຳນາດໃຫ້ໄດ້. ໃນສະຕະວັດທີ 6 ພວກນັກປະກາດຂອງໂຣມຖືກສົ່ງໄປເກາະອັງກິດ ເພື່ອນຳຄົນຊົນເຜົ່າແຊັກຊັນທີ່ຂາບໄຫວ້ຜີມາປ່ຽນສາສະໜາ. ຄົນປ່າເຖື່ອນທີ່ຫຍິ່ງຈອງຫອງເຫຼົ່ານີ້ຕ້ອນຮັບພວກເຂົາຢ່າງດີ ແລະ ມີຫຼາຍພັນຄົນຫຼົງຄຳໂມ້ມນ້າວໄປຮັບເຊື່ອຄຳສອນຂອງຄຣິສຕະຈັກໂຣມ. ເມື່ອການປະກາດຂະຫຍາຍວົງກວ້າງອອກໄປ, ຜູ້ນຳຝ່າຍສັນຕະປາປາພ້ອມດ້ວຍຄົນທີ່ຮັບເຊື່ອຄຳສອນຂອງພວກເຂົາ ໄດ້ພົບພໍ້ກັບຄຣິສຕຽນທີ່ຍັງເຊື່ອຕາມຮູບແບບຂອງອັກຄະສາວົກ. ຄວາມແຕກຕ່າງລະຫວ່າງສອງຝ່າຍນີ້ເຫັນໄດ້ຢ່າງຈະແຈ້ງ. ກຸ່ມຄຣິສຕຽນຊາວອັງກິດແບບເດີມມີຄວາມອ່ອນນ້ອມຖ່ອມຕົນ, ໃຊ້ຊີວິດຢ່າງລຽບງ່າຍ ແລະ ມີອຸປະນິໄສດີງາມ, ພ້ອມທັງມີຄຳສອນ ແລະ ການປະພຶດຕາມພຣະຄຳພີ. ໃນຂະນະດຽວກັນອີກກຸ່ມໜຶ່ງມີຄວາມງົມງວາຍ, ຖືໂຕ ແລະ ແຕ່ງກາຍຢ່າງຫຼູຫຼາອະລັງການຕາມແບບລະບອບສັນຕະປາປາ. ຕົວແທນຈາກຄຣິສຕະຈັກໂຣມຮຽກຮ້ອງຄຣິສຕະຈັກເຫຼົ່ານີ້ທີ່ປະຕິບັດຕາມຄຳສອນຂອງພຣະຄຣິສ ໃຫ້ຍອມຮັບວ່າສັນຕະປາປາມີອຳນາດສູງສຸດ. ຊາວເກາະອັງກິດໄດ້ແຕ່ຕອບຢ່າງສຸພາບວ່າ ພວກເຂົາຢາກສະແດງຄວາມຮັກຕໍ່ມະນຸດທຸກຄົນ ແຕ່ສຳລັບສັນຕະປາປາແລ້ວ ເພິ່ນບໍ່ມີສິດທີ່ຈະຖືອຳນາດສູງສຸດໃນຄຣິສຕະຈັກ. ພວກເຂົາບໍ່ສາມາດອ່ອນນ້ອມຍອມຕາມສັນຕະປາປາຫຼາຍກວ່າຄົນອື່ນ ໆ ທີ່ຕິດຕາມພຣະຄຣິສ. ມີການພະຍາຍາມຫຼາຍຕໍ່ຫຼາຍເທື່ອໃຫ້ຄຣິສຕຽນເຫຼົ່ານັ້ນຈົ່ງຮັກພັກດີຕໍ່ຄຣິສຕະຈັກໂຣມ, ແຕ່ຄຣິສຕຽນທີ່ອ່ອນສຸພາບດັ່ງກ່າວຕົກໃຈກັບຄວາມຫຍິ່ງທະນົງຕົວຂອງຕົວແທນຈາກສັນຕະປາປາ ຈຶ່ງຢືນຢັນວ່າ ມີແຕ່ພຣະຄຣິສອົງດຽວເທົ່ານັ້ນທີ່ເປັນເຈົ້ານາຍຂອງພວກເຂົາ. ຄາວນີ້ທາດແທ້ຂອງລະບອບສັນຕະປາປາກໍປາກົດໃຫ້ເຫັນ. ຜູ້ນຳຈາກຄຣິສຕະຈັກໂຣມກ່າວວ່າ: “ຖ້າ

ພວກເຈົ້າບໍ່ຍອມຮັບພວກເຮົາໃນຖານະພີ່ນ້ອງທີ່ນຳສັນຕິພາບມາໃຫ້ ກໍຈະຕ້ອງຮັບພວກເຮົາໃນຖານະສັດຕູທີ່ນຳສົງຄາມມາ. ຖ້າພວກເຈົ້າບໍ່ຍອມຮ່ວມມືກັບເຮົາໃນການສອນໃຫ້ຄົນເຜົ່າແຊັກຊັນຮູ້ຈັກທາງແຫ່ງຊີວິດແລ້ວ ກໍຈະຕ້ອງຮັບຄົມດາບຂອງພວກເຂົາທີ່ຈະຂ້າຟັນພວກເຈົ້າໃຫ້ຕາຍ."[1] ຖ້ອຍຄຳເຫຼົ່ານີ້ບໍ່ແມ່ນການຂູ່ລ້າໆ. ຝ່າຍຄຣິສຕະຈັກໂຣມໄດ້ໃຊ້ສົງຄາມ ແລະ ອຸບາຍຫຼອກລວງຕໍ່ສູ້ຜູ້ທີ່ເປັນພະຍານຝ່າຍຄວາມເຊື່ອຕາມພຣະຄຳພີຈົນຄຣິສຕະຈັກຕ່າງໆໃນເກາະອັງກິດຖືກທຳລາຍ ຫຼື ຖືກບັງຄັບໃຫ້ຍອມຈຳນົນຕໍ່ອຳນາດຂອງສັນຕະປາປາ. {GC 62.4}

ໃນດິນແດນທີ່ຢູ່ນອກເຂດອຳນາດຂອງຄຣິສຕະຈັກໂຣມ ກໍມີກຸ່ມຄຣິສຕຽນຫຼາຍກຸ່ມທີ່ຍັງຄົງຮັກສາຄວາມເຊື່ອມາຕະຫຼອດຫຼາຍສະຕະວັດ ໂດຍທີ່ພວກເຂົາໄດ້ຮັບຄວາມເສື່ອມເສຍຈາກລະບອບສັນຕະ-ປາປາພຽງເລັກນ້ອຍ. ກຸ່ມຄຣິສຕຽນເຫຼົ່ານີ້ຢູ່ທ່າມກາງຄົນທີ່ນັບຖືຜີສາງນາງໄມ້ ແລະ ເມື່ອເວລາຜ່ານໄປກໍໄດ້ຮັບອິດທິພົນຈາກຄົນທີ່ບໍ່ນັບຖືພຣະເຈົ້າເຊິ່ງຢູ່ອ້ອມຮອບພວກເຂົາ; ແຕ່ໃນຂະນະດຽວກັນ, ພວກເຂົາຍັງຖືວ່າພຣະຄຳພີເປັນບັນທັດຖານດຽວແຫ່ງຄວາມເຊື່ອ ຈຶ່ງເຊື່ອຖືຫຼັກຄວາມຈິງຫຼາຍປະເດັນຂອງພຣະຄຳພີຕະຫຼອດມາ. ຄຣິສຕຽນເຫຼົ່ານີ້ເຊື່ອວ່າກົດບັນຍັດຂອງພຣະເຈົ້ານັ້ນເປັນກົດອັນໝັ້ນຄົງຖາວອນ ແລະ ພວກເຂົາກໍຮັກສາວັນສະບາໂຕຕາມກົດບັນຍັດຂໍ້ທີສີ່ດ້ວຍ. ມີຄຣິສຕະຈັກຊາວອາມີເນຍໃນອາຊີ ແລະ ຄຣິສຕະຈັກໃນພາກກາງຂອງອາຟຣິກາ ເຊິ່ງລ້ວນແຕ່ຮັກສາວັນສະບາໂຕຕາມພຣະຄຳພີເໝືອນກັນ. {GC 63.1}

ກຸ່ມຄົນສັດຊື່ທີ່ໂດດເດັ່ນ

ແຕ່ໃນທ່າມກາງກຸ່ມຄົນທີ່ຕໍ່ຕ້ານການຂະຫຍາຍອຳນາດຂອງຄຣິສຕະຈັກໂຣມນັ້ນ ຊາວໂວດົວ[2]ໂດດເດັ່ນທີ່ສຸດ. ພວກເຂົາອາໄສຢູ່ຕາມສາຍພູພີດມົ້ງ (Piedmont) ເຊິ່ງຢູ່ໃນດິນແດນດຽວກັນກັບບ່ອນທີ່ສັນຕະປາປາຕັ້ງນະຄອນຫຼວງ; ໃນຂະນະດຽວກັນ, ພວກເຂົາກໍເປັນກຸ່ມຄົນທີ່ຕໍ່ຕ້ານລະບອບສັນຕະ-ປາປາຢ່າງໜັກແໜ້ນທີ່ສຸດ. ຄຣິສຕະຈັກໃນເຂດສາຍພູພີດມົ້ງສາມາດຮັກສາອິດສະຫຼະພາບມາເປັນເວລາຫຼາຍຮ້ອຍປີ, ແຕ່ໃນທີ່ສຸດຄຣິສຕະຈັກໂຣມກໍຮຸກຮ້ອງໃຫ້ພວກເຂົາຍອມຈຳນົນ. ຫຼັງຈາກການຕໍ່ສູ້ບໍ່ປະສົບຜົນສຳເລັດ ຜູ້ນຳຂອງຄຣິສຕະຈັກເຫຼົ່ານັ້ນຈຶ່ງຈຳໃຈຍອມຮັບອຳນາດຜະເດັດການ ທີ່ເບິ່ງຄືໂລກທັງໂລກໃຫ້ການຍົກຍ້ອງນັບຖື. ແຕ່ວ່າມີບາງຄົນບໍ່ຍອມຕໍ່ອຳນາດຂອງສັນຕະປາປາ ຫຼື ພວກຜູ້ນຳຄຣິສຕະຈັກຝ່າຍໂຣມ. ພວກເຂົາຕັ້ງໃຈທີ່ຈະຮັກສາຄວາມຈົງຮັກພັກດີຕໍ່ພຣະເຈົ້າ ທັງຄວາມບໍຣິສຸດ ແລະ ຄວາມລຽບງ່າຍຂອງຄວາມເຊື່ອ ຈຶ່ງເກີດການແບ່ງແຍກກັນ. ຄົນທີ່ຍັງຄົງຢຶດໝັ້ນຕາມຄວາມເຊື່ອດັ້ງເດີມໄດ້ຖອຍໜີ, ບາງຄົນຍ້າຍອອກຈາກບ້ານທີ່ຢູ່ຕາມສາຍພູອານເປ (Alps) ເພື່ອໄປເປັນພະຍານຝ່າຍຄວາມຈິງໃນຕ່າງປະເທດ. ສ່ວນຄົນອື່ນກໍຖອຍໜີເຂົ້າໄປອາໄສຕາມຮ່ອມພູອັນລີ້ລັບ ແລະ ຕາມພູຜາອັນເປັນປ້ອມປະການຂອງພວກເຂົາ ເພາະບ່ອນນັ້ນມີຄວາມປອດໄພທີ່ຈະນະມັດສະການພຣະເຈົ້າຢ່າງເປັນອິດສະຫຼະ. {GC 64.1}

ຫຼັກຄວາມຈິງທີ່ຄຣິສຕຽນຊາວໂວດົວເຊື່ອ ແລະ ສັ່ງສອນກັນມາຫຼາຍສະຕະວັດ ແຕກຕ່າງໄປຈາກຄຳສອນທຽມເທັດຂອງຄຣິສຕະຈັກໂຣມຢ່າງເຫັນໄດ້ຊັດ. ຄວາມເຊື່ອຂອງພວກເຂົາຕັ້ງໝັ້ນຢູ່ເທິງພຣະຄຳຂອງພຣະເຈົ້າ ອັນເປັນລະບົບຄຳສອນທີ່ແທ້ຈິງຂອງສາສະໜາຄຣິສ. ຊາວໂວດົວອາໄສຢູ່ໃນ

[1] *ປະຫວັດການປະຕິຮູບສາສະໜາໃນສະຕະວັດທີ 16*, ເຫຼັ້ມ 17, ບົດ 2. ໂດຍ ເຈ. ເອຊ. ເມີນ ໂດບິນເຍ (J. H. Merle D'Aubigné).

[2] ຄຳວ່າ: ໂວດົວ (Vaudois) ເປັນພາສາຝຣັ່ງ, ສ່ວນພາສາອັງກິດເອີ້ນວ່າ: ວໍເດັນຊີດຊ໌ (Waldenses). ຜູ້ຂຽນໃຊ້ທັງສອງຄຳສະຫຼັບກັນ ແຕ່ເພື່ອສະດວກໃນການເຂົ້າໃຈ ຜູ້ຈັດພິມຈຶ່ງເລືອກໃຊ້ແຕ່ຄຳວ່າໂວດົວ.

ຊົນນະບົດ ແລະ ໃຊ້ຊີວິດຢ່າງລຽບງ່າຍຕາມທຳມະຊາດອັນເປົ່າປ່ຽວທີ່ຫ່າງໄກສອກຫຼີກ, ແຕ່ລະ ມື້ກໍລ້ຽງຝູງແກະ ແລະ ເຮັດສວນໝາກອະງຸ່ນ. ຄົນເຫຼົ່ານີ້ບໍ່ໄດ້ຄົ້ນພົບຄວາມຈິງທີ່ຂັດແຍ້ງຕໍ່ຄຳ ສອນທຸກເທັດຂອງຄຣິສຕະຈັກປອມດ້ວຍຕົນເອງ. ຄວາມເຊື່ອຂອງພວກເຂົານັ້ນບໍ່ແມ່ນຄວາມເຊື່ອທີ່ ຫາກໍໄດ້ຮັບມາ ແຕ່ເປັນຄວາມສັດທາທີ່ໄດ້ຮັບເປັນມູນມໍລະດົກຈາກບັນພະບຸລຸດ ເປັນການສືບຕໍ່ ຄວາມເຊື່ອຂອງຄຣິສຕະຈັກຍຸກອັກຄະສາວົກ ກ່ຳຄື “ຄວາມເຊື່ອເຊິ່ງພຣະເຈົ້າໄດ້ມອບໃຫ້ແກ່ປະຊາຊົນ ຂອງພຣະອົງເທື່ອດຽວເປັນການສິ້ນສຸດ.” (ຢູດາ 3). ຄຣິສຕະຈັກໃນປ່າເຂົານີ້ເປັນຊຸມນຸມຜູ້ເຊື່ອທີ່ ແທ້ຈິງຂອງພຣະຄຣິສ ບໍ່ແມ່ນຄຣິສຕະຈັກທີ່ນັ່ງບັນລັງຢ່າງອວດອົ່ງທະນົງຕົວໃນນະຄອນຫຼວງແຫ່ງ ແຜ່ນດິນໂລກ. ພຣະເຈົ້າຊົງມອບໝາຍໃຫ້ຄຣິສຕະຈັກທີ່ແທ້ຈິງ ເຝົ້າຮັກສາຄວາມຈິງຂອງພຣະອົງອັນ ເປັນດັ່ງສົມບັດທີ່ລ້ຳຄ່າ, ພວກເຂົາມີໜ້າທີ່ໃນການນຳຄວາມຈິງເຫຼົ່ານັ້ນໄປແບ່ງປັນໃຫ້ແກ່ຊາວໂລກ ທັງປວງ. *{GC 64.2}*

ໜຶ່ງໃນສາເຫດສຳຄັນທີ່ເຮັດໃຫ້ຄຣິສຕະຈັກທີ່ແທ້ຈິງແຍກອອກຈາກຄຣິສຕະຈັກໂຣມ ເປັນເພາະ ຄວາມກຽດຊັງທີ່ຄຣິສຕະຈັກໂຣມມີຕໍ່ວັນສະບາໂຕທີ່ຖືກຕ້ອງຕາມຄຳສອນໃນພຣະຄຳພີ. ອຳນາດສັນຕະ-ປາປາໄດ້ “ປະຖິ້ມຄວາມຈິງແຫ່ງສາສະໜາ” ຕາມຄຳພະຍາກອນ.[3] ກົດບັນຍັດຂອງພຣະເຈົ້າຖືກ ຢຽບຢ່ຳລົງດິນ ໃນຂະນະທີ່ທຳນຽມ ແລະ ປະເພນີຂອງມະນຸດຖືກຍົກຍ້ອງເຊີດຊູ. ຕັ້ງແຕ່ຄຣິສຕະຈັກ ທັງຫຼາຍຕົກຢູ່ພາຍໃຕ້ອຳນາດຂອງສັນຕະປາປາ ພວກເຂົາຖືກບັງຄັບໃຫ້ຮັກສາວັນອາທິດເປັນວັນ ສັກສິດ. ໃນເມື່ອຄຳສອນທີ່ຜິດພ້ຽນ ແລະ ຄວາມງົມງວາຍແຜ່ກະຈາຍເປັນວົງກວ້າງ ມີຄົນທີ່ເຊື່ອ ພຣະເຈົ້າຢ່າງແທ້ຈິງຫຼາຍຄົນສັບສົນ ຈົນເຊົາເຮັດວຽກໃນວັນອາທິດໃນຂະນະທີ່ຍັງຮັກສາວັນສະບາໂຕ ຢູ່. ແຕ່ການກະທຳດັ່ງກ່າວບໍ່ເປັນທີ່ພໍໃຈສຳລັບພວກຜູ້ນຳຂອງລະບອບສັນຕະປາປາ. ພວກເຂົາຮຽກຮ້ອງ ວ່າ ຈະຕ້ອງຮັກສາວັນອາທິດໃຫ້ບໍຣິສຸດ ແລະ ຈະຕ້ອງເຮັດໃຫ້ວັນສະບາໂຕເປັນວັນສາມັນທຳມະດາ. ຖ້າ ຜູ້ໃດກ້າໃຫ້ກຽດວັນສະບາໂຕກໍຈະຖືກປະນາມຢ່າງຮຸນແຮງ. ມີທາງດຽວທີ່ຈະຮັກສາກົດບັນຍັດຂອງ ພຣະເຈົ້າໄດ້ຢ່າງສັນຕິ ນັ້ນແມ່ນການໜີຫ່າງຈາກອຳນາດຂອງຄຣິສຕະຈັກໂຣມ. *{GC 65.1}*

ຊາວໂວດົວແມ່ນໜຶ່ງໃນຊົນເຜົ່າທຳອິດຂອງເອີຣົບທີ່ມີພຣະຄຳພີແປເປັນພາສາຂອງຕົນເອງ. ຫຼາຍ ຮ້ອຍປີກ່ອນການປະຕິຮູບສາສະໜາຄັ້ງໃຫຍ່ຂອງສະຕະວັດທີ 16, ພວກເຂົາກໍມີພຣະຄຳພີສະບັບ ຂຽນດ້ວຍມືແລ້ວ. ຄວາມຈິງທີ່ພວກເຂົາຖືໄວ້ນັ້ນບໍຣິສຸດໄຮ້ສິ່ງເຈືອປົນ ອັນເປັນເຫດໃຫ້ພວກເຂົາຖືກ ກຽດຊັງ ແລະ ຖືກກົດຂີ່ຂົ່ມເຫັງເປັນພິເສດ. ຊາວໂວດົວປະກາດວ່າຄຣິສຕະຈັກໂຣມແມ່ນບາບີໂລນ ຕາມຄຳພະຍາກອນຂອງພຣະທຳພຣະນິມິດ. ພວກເຂົາຢືນຂຶ້ນເພື່ອຂັດຂວາງອິດທິພົນເສື່ອມເສຍຂອງ ຄຣິສຕະຈັກໂຣມ ເຖິງແມ່ນວ່າຈະເປັນການສ່ຽງຊີວິດກໍຕາມ. ເມື່ອການຂົ່ມເຫັງນັ້ນສືບຕໍ່ເນື່ອງເປັນ ເວລາດົນນານ ມີບາງຄົນຍອມປ່ຽນຈຸດເດັ່ນແຫ່ງຄວາມເຊື່ອໄປເທື່ອລະໜ້ອຍ ແຕ່ໃນຂະນະດຽວກັນມີ ບາງຄົນທີ່ຍັງຍຶດໝັ້ນໃນຄວາມຈິງ. ຕະຫຼອດຫຼາຍຮ້ອຍປີແຫ່ງຄວາມມືດມົນ ແລະ ການຫຼົງໄຫຼຕາມ ຄຳສອນທຸກເທັດນັ້ນ ມີຊາວໂວດົວທີ່ບໍ່ຍອມຮັບອຳນາດສູງສຸດຂອງຄຣິສຕະຈັກໂຣມ; ພວກເຂົາປະຕິເສດ ການຂາບໄຫວ້ຮູບຂອງພວກນັກບຸນ ເພາະເປັນການຂາບໄຫວ້ຮູບເຄົາລົບ, ນອກຈາກນັ້ນກໍຍັງຮັກສາ ວັນສະບາໂຕອັນແທ້ຈິງ. ພວກເຂົາຮັກສາຄວາມເຊື່ອທ່າມກາງການແສຕໍ່ຕ້ານທີ່ຮຸນແຮງທີ່ສຸດ ພ້ອມ ທັງຢືນຢັດເພື່ອພຣະຄຳຂອງພຣະເຈົ້າ ແລະ ເພື່ອຖວາຍກຽດແດ່ພຣະອົງ ເຖິງແມ່ນວ່າຈະຕ້ອງຖືກ

[3] ເບິ່ງ ດານີເອນ 8:12.

ຫອກທະຫານສະວອຍ[4] ແທງທະລຸ ຫຼື ຖືກຄົນຂອງຄຣິສຕະຈັກໂຣມຈັບໄປປະຫານດ້ວຍການເຜົາໄຟ ກໍຕາມ. {GC 65.2}

ປ້ອມປະການແຫ່ງພູຜາເປັນທີ່ຫຼົບໄພຂອງຜູ້ທີ່ຖືກກົດຂີ່ຂົ່ມເຫັງໃນທຸກຍຸກທຸກສະໄໝ, ຊາວໂວດົວ ຈຶ່ງໄປລີ້ໄພໃນບ່ອນແບບນີ້ເຊັ່ນກັນ. ແສງແຫ່ງຄວາມຈິງໄດ້ສ່ອງອອກຈາກທີ່ນັ້ນທ່າມກາງຄວາມມືດແຫ່ງ ຍຸກກາງ. ຢູ່ບ່ອນນັ້ນ ພະຍານຝ່າຍຄວາມຈິງໄດ້ຮັກສາຄວາມເຊື່ອດັ້ງເດີມໄວ້ຕະຫຼອດໄລຍະເວລາໜຶ່ງ ພັນປີ. {GC 65.3}

ພຣະເຈົ້າ ຊົງ ຈັດຕຽມ ສະຖານທີ່ ທີ່ ປອດໄພ ໃຫ້ ແກ່ ຄົນ ຂອງ ພຣະອົງ ທ່າມກາງ ພູຜາ ອັນ ສູງ ໃຫຍ່ ຕະການຕາ, ເປັນ ສະຖານທີ່ ທີ່ ເໝາະສົມ ສຳລັບ ຄວາມ ຈິງ ອັນ ຍິ່ງໃຫຍ່ ທີ່ ພຣະອົງ ຊົງ ມອບໝາຍ ໃຫ້ ພວກເຂົາດູແລຮັກສາ. ສຳລັບຜູ້ລີ້ໄພທີ່ສັດຊື່ດັ່ງກ່າວ, ພູເຂົາເຫຼົ່ານັ້ນເປັນສັນຍະລັກແຫ່ງຄວາມຊອບທຳ ອັນໝັ້ນຄົງຖາວອນ ແລະ ບໍ່ປ່ຽນແປງຂອງພຣະເຢໂຮວາ. ພວກເຂົາຊີ້ໃຫ້ລູກຫຼານຫຼຽວເບິ່ງຄວາມ ສູງໃຫຍ່ຂອງພູເຂົາທີ່ສະຫງ່າງາມ ອັນຕັ້ງຢູ່ຢ່າງໝັ້ນຄົງ ແລະ ເວົ້າໃຫ້ ພວກເຂົາ ຟັງ ເຖິງ ພຣະເຈົ້າ ວ່າ ໃນ ພຣະອົງ "ບໍ່ ມີ ການ ປ່ຽນ ແປງ ແລະ ບໍ່ ມີ ເງົາ ເນື່ອງ ຈາກ ການ ຊົງ ໝຸນ ວຽນ." (ຢາໂກໂບ 1:17). ພຣະ ຄຳ ຂອງ ພຣະ ອົງ ໝັ້ນ ຄົງ ຖາ ວອນ ເໝືອນ ດັ່ງ ພູ ເຂົາ. ພຣະ ເຈົ້າ ຊົງ ວາງ ຮາກ ຖານ ຂອງ ພູ ເຂົາ ໄວ້ ຢ່າ ງ ແຂງ ແກ່ນ ແລະ ມີ ແຕ່ ພຣະ ຫັດ ອັນ ຊົງ ຣິດ ຂອງ ພຣະ ອົງ ເທົ່າ ນັ້ນ ທີ່ ຈະ ເຄື່ອນ ຍ້າຍ ມັນ ອອກ ຈາກ ບ່ອນ ຂອງ ມັນ ໄປ ໄດ້; ເຊັ່ນ ດຽວ ກັນ, ພຣະ ອົງ ຊົງ ສະ ຖາ ປະ ນາ ກົດ ບັນ ຍັດ ອັນ ເປັນ ຮາກ ຖານ ການ ປົກ ຄອງ ຂອງ ພຣະ ອົງ ໃນ ສະ ຫວັນ ແລະ ແຜ່ ນ ດິນ ໂລກ. ມະ ນຸດ ສາ ມາດ ທຳ ລາຍ ກັນ ເອງ ໄດ້ ແຕ່ ມະ ນຸດ ຈະ ຈັບ ພູ ເຂົາ ແລະ ແກວ່ ງ ມັນ ລົງ ທະ ເລ ຍັງ ງ່າຍ ກວ່າ ທີ່ ຈະ ປ່ຽນ ກົດ ບັນ ຍັດ ຂໍ້ ໃດ ຂໍ້ ໜຶ່ ງ ຂອງ ພຣະ ເຢ ໂຮ ວາ ຫຼື ພຣະ ສັນ ຍາ ຂໍ້ ດຽວ ທີ່ ຊົງ ກ່າ ວ ໄວ້ ສຳ ລັບ ຜູ້ ທີ່ ປະ ຕິ ບັດ ຕາມ ນ້ຳ ພຣະ ໄທ ຂອງ ພຣະ ອົງ. ໃນ ເລື່ອງ ການ ປະ ຕິ ບັດ ຢ່າ ງ ສັດ ຊື່ ຕໍ່ ກົດ ບັນ ຍັດ ຂອງ ພຣະ ເຈົ້າ ນັ້ນ ຜູ້ ຮັບ ໃຊ້ ຂອງ ພຣະ ອົງ ຄວນ ຢືນ ຢັດ ໝຸ ງ ວ ແໜ້ ນ ເໝືອນ ດັ່ງ ພູ ເຂົາ ທີ່ ໝັ້ ນ ຄົ ງ ບໍ່ ປ່ ຽ ນ ແປ ງ. {GC 66.1}

ຍອດເຂົາທີ່ອ້ອມຮອບຮ່ອມພູຂອງພວກເຂົານັ້ນ ເປັນພະຍານຢູ່ຕະຫຼອດເວລາເຖິງຣິດອຳນາດຂອງ ພຣະເຈົ້າໃນການຊົງສ້າງ ແລະ ການປົກປ້ອງຄຸ້ມຄອງຢ່າງບໍ່ເຄີຍລົ້ມເຫຼວຂອງພຣະອົງ. ຄົນທີ່ລີ້ໄພ ເຫຼົ່ານັ້ນໄດ້ຮຽນຮູ້ທີ່ຈະຊື່ນຊົມຍິນດີກັບສັນຍະລັກແຫ່ງການສະຖິດຢູ່ນຳຂອງພຣະເຢໂຮວາ. ພວກເຂົາບໍ່ ຈົ່ມວ່າຫຍັງທີ່ຕ້ອງທົນກັບຄວາມທຸກ ແລະ ບໍ່ເຄີຍຮູ້ສຶກເຫງົາຫງອຍເມື່ອຕ້ອງຢູ່ຕາມພູເຂົາທີ່ອ້າງວ້າງ ເປົ່າປ່ຽວ ແຕ່ໄດ້ຂອບພຣະຄຸນພຣະເຈົ້າທີ່ພຣະອົງຊົງຈັດຕຽມບ່ອນໃຫ້ພວກເຂົາຫຼົບລີ້ໃຫ້ພົ້ນຈາກຄວາມ ໂກດຮ້າຍ ແລະ ຄວາມໂຫດຫ້ຽມຂອງມະນຸດ. ພວກເຂົາຊົມຊື່ນຍິນດີທີ່ສາມາດນະມັດສະການພຣະເຈົ້າ ຢ່າງເປັນອິດສະຫຼະ, ຫຼາຍເທື່ອເມື່ອສັດຕູໄລ່ລ່າ ພວກເຂົາກໍໜີຂຶ້ນໄປທີ່ໂງ່ນຫີນແຫ່ງເນີນພູ ແລະ ໄດ້ຮັບ ຄວາມປອດໄພ. ພວກເຂົາຮ້ອງເພງສັນລະເສີນພຣະເຈົ້າຈາກຍອດຜາອັນສູງຊັນ ແລະ ກອງທັບຝ່າຍ ສັນຕະປາປາບໍ່ສາມາດດັບສຽງເພງສັນລະເສີນດັ່ງກ່າວໄດ້. {GC 66.2}

ການສຶກສາ ແລະ ຮູບແບບຄຣິສຕະຈັກ

ຄົນເຫຼົ່ານີ້ທີ່ຕິດຕາມພຣະຄຣິສເປັນຄົນບໍຣິສຸດ, ໃຊ້ຊີວິດຢ່າງລຽບງ່າຍ ແລະ ມີຄວາມຮ້ອນຮົນ. ພວກເຂົາຖືວ່າຫຼັກຄວາມຈິງມີຄຸນຄ່າສູງກວ່າດິນດອນຕອນຫຍ້າ, ເຮືອນຊານບ້ານຊ່ອງ, ຍາດຕິພີ່ນ້ອງ, ໝູ່ເພື່ອນ ແລະ ຊີວິດຂອງພວກເຂົາເອງ. ພວກເຂົາໝັ່ນສອນຫຼັກການເຫຼົ່ານີ້ແກ່ຊາວໜຸ່ມ ແລະ ສັ່ງສອນ ລູກຫຼານໃຫ້ຮູ້ຈັກພຣະຄຳພີຕັ້ງແຕ່ອາຍຸຍັງນ້ອຍ ໃຫ້ຖືເອົາກົດບັນຍັດຂອງພຣະເຈົ້າເປັນສິ່ງສັກສິດ. ໃນ

[4] ສະວອຍ: ຣາຊວົງທີ່ປົກຄອງເຂດພິດມົງ.

ສະໄໝນັ້ນມີສຳເນົາພຣະຄຳພີໜ້ອຍ; ສະນັ້ນ, ພວກເຂົາຈຶ່ງທ່ອງຈຳຖ້ອຍຄຳອັນປະເສີດ. ຫຼາຍຄົນສາມາດທ່ອງພຣະຄຳພີເດີມ ແລະ ພຣະຄຳພີໃໝ່ເປັນບົດໆ. ຊາວໜຸ່ມຖືກສອນໃຫ້ຄິດເຖິງພຣະເຈົ້າເມື່ອເບິ່ງທຳມະຊາດ ແລະ ເມື່ອພົບກັບສິ່ງດີໆເລັກນ້ອຍໃນຊີວິດປະຈຳວັນ. ສ່ວນເດັກນ້ອຍກໍຖືກສອນໃຫ້ຂອບຄຸນພຣະອົງສຳລັບພຣະພອນທຸກຢ່າງທີ່ໄດ້ຮັບ. {GC 67.1}

ພໍ່ແມ່ທີ່ຮັກລູກມີສະຕິປັນຍາພຽງພໍທີ່ຈະບໍ່ຕາມໃຈລູກ. ອະນາຄົດຂ້າງໜ້າແມ່ນຊີວິດທີ່ລຳບາກຍາກແຄ້ນ ແລະ ອາດຈະຖືກຂ້າຍ້ອນຄວາມເຊື່ອ. ເດັກນ້ອຍຈຶ່ງຖືກສອນໃຫ້ຮູ້ຈັກອົດທົນຕັ້ງແຕ່ເຍົາໄວ ໃຫ້ຍອມເຊື່ອຟັງຜູ້ມີອຳນາດ ແຕ່ໃນຂະນະດຽວກັນໃຫ້ຮູ້ຈັກຄິດ ແລະ ປະຕິບັດດ້ວຍຕົນເອງ. ພວກເຂົາຖືກສອນຕັ້ງແຕ່ຍັງນ້ອຍໃຫ້ຮູ້ຈັກຮັບຜິດຊອບ, ໃຫ້ລະວັງຄຳເວົ້າ ແລະ ໃຫ້ຮູ້ວ່າການນິດໆງ່ຽບຄືຄວາມສະຫຼາດ. ຖ້າສັດຕູໄດ້ຍິນຖ້ອຍຄຳທີ່ບໍ່ສົມຄວນເວົ້າ ອາດຈະເປັນເຫດໃຫ້ເຈົ້າຂອງຕ້ອງສູ່ງຊີວິດ ແລະ ພີ່ນ້ອງຂອງລາວນັບຫຼາຍຮ້ອຍຄົນກໍອາດຕ້ອງສູ່ງຊີວິດໄປນຳ, ເພາະວ່າພວກສັດຕູຂອງຄວາມຈິງເປັນດັ່ງຝູງໝາປ່າ ທີ່ໄລ່ລ່າຜູ້ທີ່ກ້າອ້າງວ່າຕົນມີສິດໃນການນັບຖືສາສະໜາ. {GC 67.2}

ຊາວໂວດົວໄດ້ສະຫຼະຖິ້ມຄວາມຈະເລີນຝ່າຍໂລກເພື່ອເຫັນແກ່ຫຼັກຄວາມຈິງ, ພວກເຂົາຈຶ່ງຂະຫຍັນໝັ່ນພຽນ ອອກເຫື່ອເທແຮງ ເພື່ອໃຫ້ໄດ້ມາເຊິ່ງອາຫານປະຈຳວັນ. ພວກເຂົາເອົາໃຈໃສ່ພັດທະນາທີ່ດິນທຸກແມັດມ່ວນທົນຕາມພູເຂົາທີ່ພໍຈະປູກຝັງໄດ້ ຈົນຮ່ອມພູ ແລະ ແມ່ນແຕ່ເນີນເຂົາທີ່ດິນບໍ່ດີກໍກາຍເປັນພື້ນທີ່ກະສິກຳທີ່ອຸດົມສົມບູນໄປດ້ວຍຜົນລະປູກຈາກພືດພັນຢ່າງຫຼວງຫຼາຍ. ມໍລະດົກດ້ານວັດຖຸທີ່ລູກຫຼານໄດ້ຮັບຄືການຝຶກອຸປະນິໄສຂອງການຮູ້ຈັກປະຢັດ ແລະ ຮູ້ຈັກການເສຍສະຫຼະຢ່າງແທ້ຈິງ. ພວກເຂົາໄດ້ຮຽນຮູ້ວ່າຊີວິດຕ້ອງໄດ້ຮັບການຝຶກຝົນໃຫ້ມີວິໄນ ເພາະນີ້ແມ່ນພຣະປະສົງຂອງພຣະເຈົ້າ; ທຸກສິ່ງທີ່ພວກເຂົາປາຖະໜາຢູ່ນັ້ນ ແມ່ນຕ້ອງອາໄສສີ່ຢ່າງເພື່ອຈະໄດ້ມາ ນັ້ນຄືການອອກກຳລັງເຫື່ອແຮງ, ການວາງແຜນລ່ວງໜ້າ, ການເອົາໃຈໃສ່ຢ່າງຕໍ່ເນື່ອງ ແລະ ຄວາມເຊື່ອວາງໃຈ. ຂະບວນການຝຶກເດັກນ້ອຍ ແລະ ສອນຊາວໜຸ່ມນັ້ນເປັນເລື່ອງທີ່ຕ້ອງອາໄສຄວາມອົດທົນ ແລະ ຄວາມອຸດສາຫະ ແຕ່ເປັນສິ່ງທີ່ປູກປັ້ນ ແລະ ຫຼໍ່ຫຼອມພວກເຂົາໃຫ້ເຕີບໂຕເປັນຜູ້ໃຫຍ່; ນີ້ແຫຼະຄືສິ່ງທີ່ຈຳເປັນສຳລັບມະນຸດຜູ້ຕົກສູ່ຄວາມບາບ ແລະ ເປັນໂຮງຮຽນທີ່ພຣະເຈົ້າຈັດຕຽມໄວ້ເພື່ອຝຶກຝົນ ແລະ ພັດທະນາມະນຸດ. ຊາວໜຸ່ມລ້ຽງເຄີຍກັບຄວາມລຳບາກ ແລະ ການອອກແຮງງານ, ແຕ່ໃນຂະນະດຽວກັນ ພວກເຂົາຍັງໄດ້ພັດທະນາສະໝອງຄວາມຄິດ ແລະ ຖືກສອນໃຫ້ຮູ້ວ່າຄວາມສາມາດທຸກຢ່າງທີ່ຕົນມີຢູ່ນັ້ນລ້ວນແຕ່ເປັນຂອງພຣະເຈົ້າ ຈຶ່ງຄວນພັດທະນາຄວາມສາມາດເຫຼົ່ານັ້ນເພື່ອການຮັບໃຊ້ພຣະອົງ. {GC 67.3}

ບັນດາຄຣິສຕະຈັກຂອງຊາວໂວດົວມີຄວາມບໍຣິສຸດ ແລະ ຄວາມລຽບງ່າຍເໝືອນຄຣິສຕະຈັກໃນຍຸກອັກຄະສາວົກ. ພວກເຂົາຍຶດຖືພຣະຄຳພີວ່າເປັນພຽງສິ່ງດຽວທີ່ຖືກຕ້ອງ, ບໍ່ຜິດພາດ ແລະ ມີອຳນາດສູງສຸດ ຈຶ່ງບໍ່ຍອມຮັບວ່າສັນຕະປາປາ ຫຼື ຜູ້ນຳຄຣິສຕະຈັກຄົນໃດມີອຳນາດສູງສຸດ. ສາສະໜາຈານຂອງຊາວໂວດົວບໍ່ເໝືອນພວກບາດຫຼວງທີ່ຫຍິ່ງຈອງຫອງຂອງຄຣິສຕະຈັກໂຣມ ເພາະວ່າພວກເຂົາເຮັດຕາມແບບຢ່າງຂອງພຣະອາຈານຂອງຕົນ ກໍຄືພຣະເຢຊູຄຣິສ. ພຣະອົງສະເດັດມາໃນໂລກ “ບໍ່ໄດ້ມາເພື່ອໃຫ້ຄົນອື່ນຮັບໃຊ້ຕົນ ແຕ່ມາເພື່ອຮັບໃຊ້.” (ມັດທາຍ 20:28). ພວກເຂົາລ້ຽງຝູງແກະຂອງພຣະເຈົ້າ ແລະ ນຳໄປຍັງທົ່ງຫຍ້າຂຽວສົດ ແລະ ນ້ຳພຸແຫ່ງຊີວິດທີ່ມີຢູ່ໃນພຣະທຳບໍຣິສຸດຂອງພຣະອົງ. ພວກສະມາຊິກເຕົ້າໂຮມກັນຫ່າງໄກຈາກສະຖາປັດຕະຍະກຳທີ່ສ້າງຂຶ້ນຢ່າງອວດອ່ຳທະນົງຕົວ. ເຂົາທັງຫຼາຍບໍ່ໄດ້ນະມັດສະການໃນໂບດວິຫານທີ່ຍິ່ງໃຫຍ່ສະຫງ່າງາມ ແຕ່ຮວມຕົວກັນຢູ່ຫວ່າງເຂົາໃຕ້ຮົ່ມເງົາຂອງພູຜາ ຫຼື ຖ້າເປັນຊ່ວງເວລາທີ່ອັນຕະລາຍ ກໍຈະນະມັດສະການໃນໂງ່ນຫີນກຳບັງບ່ອນໃດບ່ອນໜຶ່ງ ເພື່ອຟັງຖ້ອຍຄຳແຫ່ງຄວາມຈິງຈາກຜູ້ຮັບໃຊ້ຂອງພຣະຄຣິສ. ພວກ

ສາສະໜາຈານບໍ່ພຽງແຕ່ປະກາດຂ່າວປະເສີດ ແຕ່ຍັງໄດ້ຢ້ຽມຢາມຄົນປ່ວຍ, ສັ່ງສອນເດັກນ້ອຍ, ເຕືອນສະຕິຜູ້ຫຼົງຜິດ, ຊ່ວຍໄກ່ເກ່ຍຄວາມຂັດແຍ້ງ, ສົ່ງເສີມໃຫ້ພີ່ນ້ອງສະໜັກສະໜານສາມັກຄີ ແລະ ຮັກແພງເຊິ່ງກັນແລະກັນ. ໃນຍາມສັນຕິພວກເຂົາລ້ຽງຊີບດ້ວຍຂອງຖວາຍທີ່ສະມາຊິກນຳມາດ້ວຍໃຈສັດທາ ແຕ່ໃນຂະນະດຽວກັນ ທຸກຄົນໄດ້ຝຶກສາຍອາຊີບສຳຮອງໃດໜຶ່ງ ເພື່ອລ້ຽງຊີບໃນກໍລະນີຈຳເປັນ ເໝືອນທີ່ອາຈານໂປໂລມີອາຊີບຕັດຫຍິບຜ້າເຕັນ. {GC 68.1}

ຄັດລອກ ແລະ ທ່ອງຈຳພຣະຄຳພີ

ພວກສາສະໜາຈານໄດ້ສອນຊາວໜຸ່ມໃນສາຂາວິຊາຕ່າງ ໆ ໂດຍມີພຣະຄຳພີເປັນວິຊາຫຼັກ. ຊາວໜຸ່ມໄດ້ທ່ອງຈຳພຣະທຳມັດທາຍ ແລະ ພຣະທຳໂຢຮັນ ພ້ອມດ້ວຍຈົດໝາຍຕ່າງ ໆ ໃນພຣະຄຳພີໃໝ່. ພວກເຂົາເຮັດວຽກຄັດລອກພຣະຄຳພີ ເຊິ່ງບາງສະບັບມີພຣະຄຳພີໝົດທັງເຫຼັ້ມ ສ່ວນສະບັບອື່ນມີແຕ່ພຣະຄຳພີບາງສ່ວນພ້ອມດ້ວຍຄຳອະທິບາຍຈາກຜູ້ຮູ້ພຣະຄຳພີ. ໂດຍວິທີນີ້ ສົມບັດແຫ່ງຄວາມຈິງຈຶ່ງຖືກນຳອອກມາສູ່ສາຍຕາຜູ້ຄົນ ອັນເປັນຄວາມຈິງເຊິ່ງຄົນທີ່ພະຍາຍາມຍົກຕົວເອງເໜືອພຣະເຈົ້າໄດ້ປິດບັງໄວ້ມາດົນນານ. {GC 68.2}

ພວກເຂົາອົດທົນຄັດລອກພຣະຄຳພີເທື່ອລະຂໍ້ເທື່ອລະບົດຢ່າງບໍ່ຮູ້ອິດຮູ້ເມື່ອຍ ບາງຄັ້ງແມ່ນຕ້ອງຂຽນໃນຖ້ຳ ແລະ ອາໄສແສງຈາກກະບອງໄຟ. ພວກເຂົາສືບຕໍ່ເຮັດວຽກ ເພື່ອພຣະປະສົງຂອງພຣະເຈົ້າທີ່ເປີດເຜີຍໄວ້ໃນພຣະຄຳພີຈະໄດ້ຮັບການເຜີຍແຜ່ ແລະ ສ່ອງແສງອອກໄປດັ່ງທອງຄຳບໍຣິສຸດ. ມີແຕ່ຄົນທັງຫຼາຍທີ່ຝ່າຟັນອຸປະສັກເພື່ອຄັດລອກພຣະຄຳພີເທົ່ານັ້ນ ທີ່ຮູ້ວ່າຄວາມລຳບາກທີ່ຕ້ອງປະເຊີນໄດ້ຊ່ວຍໃຫ້ພຣະປະສົງຂອງພຣະເຈົ້າມີຄວາມສະຫວ່າງສະໄຫວ, ຄວາມແຈ່ມແຈ້ງ ແລະ ມີຣິດອຳນາດຫຼາຍຂຶ້ນສ່ຳໃດ. ມີທູດສະຫວັນອ້ອມຮອບຄົນເຫຼົ່ານີ້ທີ່ມຸ່ງໝັ້ນເຮັດວຽກຢ່າງສັດຊື່. {GC 69.1}

ຊາຕານໄດ້ຊຸກຍູ້ໃຫ້ພວກບາດຫຼວງ ແລະ ຜູ້ນຳຄຣິສຕະຈັກຝ່າຍສັນຕະປາປາ ໃຫ້ທັບຖົມພຣະຄຳແຫ່ງຄວາມຈິງພາຍໃຕ້ກອງຂີ້ເຫຍື້ອແຫ່ງຄວາມເທັດ, ຄຳສອນທີ່ຜິດພ້ຽນ ແລະ ຄວາມງົມງວາຍ. ແຕ່ພຣະຄຳນັ້ນໄດ້ຮັບການຮັກສາໄວ້ຢ່າງອັດສະຈັນ ຜ່ານໄລຍະເວລາອັນດົນນານແຫ່ງສະໄໝຍຸກມືດ. ພຣະຄຳຂອງພຣະເຈົ້າໄດ້ຮັບການປະທັບຕາຂອງພຣະອົງ ບໍ່ແມ່ນຮອຍປະທັບຂອງມະນຸດ. ມີຄົນພະຍາຍາມຢ່າງບໍ່ຮູ້ອິດຮູ້ເມື່ອຍ ເພື່ອບິດເບືອນຄວາມໝາຍທີ່ເຂົ້າໃຈງ່າຍໃນພຣະຄຳພີ, ຄົນເຫຼົ່ານີ້ພະຍາຍາມໃຫ້ຂໍ້ພຣະຄຳພີຂັດແຍ້ງກັນເອງ, ແຕ່ພຣະຄຳຂອງພຣະເຈົ້າສາມາດທົນຕໍ່ພະຍຸທີ່ພັດຖະຫຼົ່ມໃສ່ ຄືກັນກັບເຮືອຂອງໂນອາທີ່ລອຍຢູ່ເໜືອຄື້ນທະເລທີ່ພັດພາ. ພຣະຄຳພີປຽບສະເໝືອນສາຍແຮ່ເງິນ ແລະ ຄຳທີ່ເຊື່ອງຊ່ອນຂອງມີຄ່າຢູ່ໃຕ້ດິນ ຜູ້ທີ່ຢາກຮູ້ຄວາມປະເສີດໃນພຣະຄຳພີຈະຕ້ອງຂຸດຄົ້ນອອກມາ; ມີແຕ່ຄົນໃຈຖ່ອມທີ່ສະແຫວງຫາດ້ວຍການອະທິຖານ ແລະ ຄວາມຈິງໃຈເທົ່ານັ້ນທີ່ຈະຄົ້ນພົບ. ພຣະເຈົ້າຊົງມີພຣະປະສົງໃຫ້ພຣະຄຳພີເປັນຕຳລາຮຽນໃຫ້ແກ່ມະນຸດສະໂລກ ເພື່ອໃຫ້ຄົນໃນທຸກຍຸກທຸກສະໄໝໄດ້ສຶກສາ ທັງໃນໄວເດັກ, ໄວໜຸ່ມສາວ ແລະ ໄວຜູ້ໃຫຍ່. ພຣະເຈົ້າປະທານພຣະຄຳຂອງພຣະອົງແກ່ມະນຸດ ເພື່ອເປີດເຜີຍໃຫ້ພວກເຂົາຮູ້ຈັກພຣະອົງ. ທຸກຄັ້ງທີ່ມີການຄົ້ນພົບຄວາມຈິງຂໍ້ໃໝ່ ກໍເຮັດໃຫ້ຮູ້ຈັກພຣະເຈົ້າຫຼາຍຂຶ້ນ ເພາະຖ້ອຍຄຳເຫຼົ່ານັ້ນແມ່ນພຣະຄຳຂອງພຣະອົງ. ການສຶກສາພຣະຄຳພີແມ່ນວິທີທີ່ພຣະເຈົ້າຊົງກຳນົດໄວ້ ເພື່ອໃຫ້ມະນຸດສະໜິດຕິດແທດກັບພຣະຜູ້ສ້າງ ແລະ ເພື່ອໃຫ້ພວກເຂົາຮູ້ຈັກພຣະປະສົງຂອງພຣະອົງໄດ້ແຈ່ມແຈ້ງຍິ່ງຂຶ້ນ. ພຣະຄຳພີເປັນສື່ກາງລະຫວ່າງພຣະເຈົ້າກັບມະນຸດ. {GC 69.2}

ປະກາດຂ່າວປະເສີດໃນສັງຄົມທີ່ຕໍ່ຕ້ານ

ຊາວໂວດົວຖືວ່າ ຄວາມຢຳເກງພຣະເຈົ້າເປັນຈຸດເລີ່ມຕົ້ນຂອງປັນຍາ, ແຕ່ໃນຂະນະດຽວກັນພວກເຂົາກໍຍອມຮັບວ່າການຕິດຕໍ່ຄົບຄ້າກັບສັງຄົມໂລກ, ການຮຽນຮູ້ນິໄສຄົນ ແລະ ການເຮັດວຽກຢ່າງຮ້ອນຮົນ ມີຄວາມສຳຄັນເຊັ່ນກັນເພາະສິ່ງເຫຼົ່ານີ້ຈະຊ່ວຍພັດທະນາສະໝອງ ແລະ ຝຶກການສັງເກດ. ຊາວໜຸ່ມ ບາງຄົນຖືກສົ່ງໄປຮຽນໃນສະຖາບັນການສຶກສາທີ່ປະເທດຝຣັ່ງ ຫຼື ປະເທດອີຕາລີ ເພາະມີໂອກາດ ຮ່ຳຮຽນໄດ້ກວ້າງ ແລະ ສູງຂຶ້ນກວ່າໂຮງຮຽນທັງຫຼາຍຂອງພວກເຂົາທີ່ສ້າງຂຶ້ນຕາມພູຜາ. ຊາວໜຸ່ມທີ່ ໄປຮຽນເຊັ່ນນີ້ຖືກທົດລອງຫຼາຍຢ່າງ; ພວກເຂົາໄດ້ເຫັນຄວາມຊົ່ວຊ້າຂອງຄົນ ແລະ ຕ້ອງຮັບມືກັບຜູ້ ທີ່ຊາຕານໃຊ້ມາໃຫ້ແນະນຳຄວາມເທັດຢ່າງແນບນຽນ ແລະ ສອນດ້ວຍການຫຼອກລວງທີ່ອັນຕະລາຍ ທີ່ສຸດ. ແຕ່ການສຶກສາໃນໄວເດັກໄດ້ກຽມພວກເຂົາເພື່ອຮັບມືກັບສິ່ງເຫຼົ່ານີ້. {GC 69.3}

ຊາວໜຸ່ມຖືກສອນບໍ່ໃຫ້ໄວ້ໃຈຜູ້ໃດໃນສະຖາບັນການສຶກສາທີ່ຕົນໄປຮຽນນັ້ນ. ພວກເຂົາໄດ້ຫຍິບ ເສື້ອຜ້າໃຫ້ມີກະເປົ໋າລັບ ເພື່ອເຊື່ອງສິ່ງທີ່ລ້ຳຄ່າທີ່ສຸດ ກໍຄືສຳເນົາພຣະຄຳພີ. ຄົນເຫຼົ່ານີ້ໄດ້ເອົາຜົນງານ ຄັດລອກພຣະຄຳພີທີ່ໃຊ້ເວລາຫຼາຍເດືອນຫຼາຍປີຕິດຕົວໄປນຳ ແລະ ເມື່ອໃດທີ່ມີໂອກາດແບ່ງປັນໂດຍ ບໍ່ຖືກຈັບຜິດ ກໍຈະແບ່ງເອກະສານພຣະຄຳພີສ່ວນໜຶ່ງໃຫ້ຄົນທີ່ເບິ່ງຄືພ້ອມທີ່ຈະຮັບຄວາມຈິງ. ຄົນ ໜຸ່ມຊາວໂວດົວໄດ້ຮັບການຝຶກຝົນເພື່ອຈຸດປະສົງນີ້ຕັ້ງແຕ່ເປັນແອ້ອຍນັ່ງຕັກແມ່; ພວກເຂົາເຂົ້າໃຈ ໜ້າທີ່ຂອງຕົນເອງ ແລະ ເຮັດວຽກງານນັ້ນດ້ວຍຄວາມສັດຊື່. ມີຄົນກັບໃຈໃນສະຖາບັນການສຶກສາ ເຫຼົ່ານັ້ນ ແລະ ຫຼາຍຄັ້ງຫຼັກຄວາມຈິງໄດ້ແຜ່ລາມໄປທົ່ວສະຖາບັນການສຶກສາ ແຕ່ຜູ້ນຳຝ່າຍສັນຕະປາປາ ບໍ່ສາມາດຊອກຮູ້ທີ່ມາຂອງຄຳສອນທີ່ພວກຕົນຕູ່ວ່າເປັນຄວາມເທັດທີ່ເຮັດໃຫ້ຄົນເສື່ອມເສຍ. {GC 70.1}

ພຣະວິນຍານຂອງພຣະຄຣິສເປັນພຣະວິນຍານແຫ່ງການປະກາດ. ສິ່ງທຳອິດທີ່ຄົນກັບໃຈໃໝ່ຢາກ ເຮັດກໍຄື ນຳຄົນອື່ນໃຫ້ຮູ້ຈັກພຣະຜູ້ຊ່ວຍໃຫ້ລອດເໝືອນທີ່ຕົນໄດ້ຮູ້ຈັກ. ພວກຄຣິສຕຽນຊາວໂວດົວເປັນ ແບບນັ້ນເຊັ່ນກັນ. ຄົນເຫຼົ່ານັ້ນຮູ້ສຶກວ່າ ພຣະເຈົ້າບໍ່ພຽງແຕ່ຕ້ອງການໃຫ້ພວກເຂົາຮັກສາຄວາມຈິງໃຫ້ ບໍຣິສຸດໃນຄຣິສຕະຈັກຂອງຕົນເອງເທົ່ານັ້ນ ແຕ່ພວກເຂົາມີໜ້າທີ່ໃນການສ່ອງສະຫວ່າງໄປຍັງຄົນທີ່ຢູ່ໃນ ຄວາມມືດ ແລະ ນຳພຣະຄຳອັນຊົງຣິດຂອງພຣະເຈົ້າໄປປະກາດເພື່ອປົດແອກຂອງລະບອບສັນຕະປາປາ ອີກນຳ. ພວກສາສະໜາຈານຊາວໂວດົວໄດ້ຮັບການຝຶກອົບຮົມໃຫ້ເປັນນັກປະກາດ, ສ່ວນຊາວໜຸ່ມທຸກ ຄົນທີ່ຄິດຢາກເປັນສາສະໜາຈານ ກໍຕ້ອງມີປະສົບການໃນການປະກາດເສຍກ່ອນ. ທຸກຄົນຕ້ອງຮັບໃຊ້ ດ້ວຍການປະກາດຢູ່ສາມປີໃນບ່ອນທີ່ມີຄົນຮູ້ຈັກພຣະເຈົ້າໜ້ອຍກ່ອນທີ່ຈະຮັບຕຳແໜ່ງເປັນອາຈານປະຈຳ ໂບດຢູ່ບ້ານ. ການຮັບໃຊ້ດັ່ງກ່າວຕ້ອງອາໄສການເສຍສະຫຼະຕັ້ງແຕ່ເລີ່ມຕົ້ນ ຈຶ່ງເປັນການຝຶກຝົນທີ່ ເໝາະສົມສຳລັບຊີວິດອາຈານປະຈຳໂບດໃນສະໄໝທີ່ທ້າທາຍຈິດວິນຍານຂອງຄົນ. ຊາວໜຸ່ມທີ່ໄດ້ຮັບ ການເຈີມຕັ້ງໃຫ້ເປັນສາສະໜາຈານຮູ້ວ່າສິ່ງທີ່ລໍຖ້າຢູ່ຂ້າງໜ້າບໍ່ແມ່ນຄວາມຮັ່ງມີ ຫຼື ກຽດຕິຍົດສັກສີ ຝ່າຍໂລກ ແຕ່ແມ່ນຊີວິດທີ່ຕ້ອງສູ້ຊົນໃນການເຮັດວຽກໜັກ, ສ່ຽງອັນຕະລາຍ ແລະ ອາດຈະຕ້ອງ ເສຍຊີວິດຍ້ອນຄວາມເຊື່ອ. ພວກຊາວໜຸ່ມຖືກສົ່ງອອກໄປປະກາດເປັນຄູ່ ເໝືອນຕອນທີ່ພຣະເຢຊູໄດ້ ສົ່ງພວກສາວົກຂອງພຣະອົງອອກໄປ ຄືມີຊາວໜຸ່ມຄົນໜຶ່ງ ແລະ ສ່ວນຫຼາຍກໍມີຜູ້ອາວຸໂສຄົນໜຶ່ງທີ່ມີ ປະສົບການ. ຜູ້ອາວຸໂສນັ້ນມີໜ້າທີ່ອົບຮົມສັ່ງສອນ ແລະ ໃຫ້ຄຳແນະນຳ ສ່ວນຊາວໜຸ່ມນັ້ນມີໜ້າທີ່ ເອົາໃຈໃສ່ຕໍ່ການສັ່ງສອນດັ່ງກ່າວ. ບາງຄັ້ງທັງສອງກໍແຍກກັນເຮັດວຽກຄົນລະບ່ອນ ແຕ່ກໍມາພົບກັນ ເລື້ອຍໆເພື່ອອະທິຖານ, ປຶກສາຫາລືກັນ ແລະ ເສີມຄວາມເຊື່ອເຊິ່ງກັນແລະກັນ. {GC 70.2}

ຖ້າຫາກວ່າຄົນທົ່ວໄປຮູ້ເປົ້າໝາຍການປະກາດຂອງພວກເຂົາ ພາລະກິດຂອງຕົນກໍຈະບໍ່ປະສົບ

ຜົນສຳເລັດຢ່າງແນ່ນອນ; ສະນັ້ນ, ຈຶ່ງຕ້ອງປົກປິດຈຸດປະສົງໄວ້ຢ່າງລະມັດລະວັງ. ຜູ້ປະກາດທຸກຄົນປະກອບອາຊີບເພື່ອປິດບັງການປະກາດ ແລະ ສ່ວນຫຼາຍແມ່ນເລືອກອາຊີບພໍ່ຄ້າ. “ພວກເຂົາມີຜ້າໄໝ, ເຄື່ອງປະດັບ ແລະ ສິນຄ້າອື່ນທີ່ໃນສະໄໝນັ້ນຫາຊື້ໄດ້ຍາກ ຍົກເວັ້ນໃນຕະຫຼາດຕ່າງເມືອງຕ່າງແດນ, ຊາວບ້ານຈຶ່ງອ້າແຂນຕ້ອນຮັບພວກເຂົາໃນຖານະພໍ່ຄ້າ ເຊິ່ງຖ້າແມ່ນໄປໃນຖານະຜູ້ປະກາດກໍຄົງຖືກຂັບໄລ່ໄສ່ສົ່ງ.”[5] ພວກເຂົາເຝົ້າພາວະນາຂໍສະຕິປັນຍາຈາກພຣະເຈົ້າຢູ່ສະເໝີ ເພື່ອຈະສາມາດນຳສົມບັດອັນລ້ຳຄ່າຍິ່ງກວ່າເງິນຄຳ ຫຼື ເພັດນິນຈິນດາໃຫ້ຄົນອື່ນ ກໍຄືຂ່າວປະເສີດ. ພວກເຂົາເຊື່ອງເອົາເອກະສານພຣະຄຳພີຕິດຕົວໄປນຳ, ບາງສະບັບແມ່ນພຣະຄຳພີໝົດທັງເຫຼັ້ມ ບາງສະບັບມີແຕ່ສ່ວນໃດສ່ວນໜຶ່ງຂອງພຣະຄຳພີ, ແລ້ວເມື່ອມີໂອກາດ ກໍຈະແນະນຳລູກຄ້າໃຫ້ຮູ້ຈັກເອກະສານພຣະຄຳພີເຫຼົ່ານີ້. ຫຼາຍຄັ້ງລູກຄ້າເກີດຄວາມຢາກອ່ານພຣະຄຳຂອງພຣະເຈົ້າ ຜູ້ປະກາດຈຶ່ງຍິນດີຝາກເອກະສານພຣະຄຳພີໄວ້ກັບຄົນທີ່ມີໃຈຢາກຮັບເອົາ. *{GC 71.1}*

ວຽກງານຂອງຜູ້ປະກາດເຫຼົ່ານີ້ເລີ່ມຕົ້ນໃນຮ່ອມພູ ແລະ ທົ່ງພຽງຕີນພູທີ່ພວກເຂົາອາໄສຢູ່, ແຕ່ກໍໄດ້ຂະຫຍາຍໄກອອກໄປຈາກຂົງເຂດເຫຼົ່ານັ້ນ. ພວກເຂົາຍ່າງດ້ວຍຕີນເປົ່າ ແລະ ນຸ່ງຮົ່ມເສື້ອຜ້າເນື້ອຫຍາບອັນມີຮອຍເປື້ອນຈາກການເດີນທາງ ເໝືອນເສື້ອຜ້າຂອງພຣະເຢຊູຄຣິສຜູ້ເປັນພຣະອາຈານຂອງພວກເຂົາ. ນັກປະກາດເຫຼົ່ານີ້ຜ່ານມະຫາມະຄອນຕ່າງ ໆ ແລະ ເດີນທາງໄປຍັງດິນແດນທີ່ຫ່າງໄກ ແຕ່ບໍ່ວ່າຈະໄປທີ່ໃດ ກໍຈະຫວ່ານເມັດພືດແຫ່ງຄວາມຈິງອັນປະເສີດໄວ້ທີ່ນັ້ນ. ມິຄຣິສຕະຈັກເກີດຂຶ້ນຕະຫຼອດເສັ້ນທາງການເດີນທາງຂອງພວກເຂົາ ແລະ ເລືອດຂອງຄົນທັງຫຼາຍທີ່ຖືກຂ້າຍ້ອນຄວາມເຊື່ອກໍໄດ້ເປັນພະຍານຝ່າຍຄວາມຈິງ. ໃນວັນສຳຄັນຍິ່ງໃຫຍ່ແຫ່ງອົງພຣະຜູ້ເປັນເຈົ້າຈະປາກົດໃຫ້ເຫັນວ່າ ມີຄົນຈຳນວນຫຼວງຫຼາຍໄດ້ຮັບຄວາມລອດພົ້ນເພາະການປະກາດຂອງຜູ້ສັດຊື່ເຫຼົ່ານີ້. ພຣະຄຳຂອງພຣະເຈົ້າຂະຫຍາຍຜົນຢ່າງງຽບ ໆ ທົ່ວທຸກປະເທດໃນເອີຣົບທີ່ມີການນັບຖືສາສະໜາຄຣິສ ແລະ ມີຄົນຮັບເຂົ້າໄປໃນບ້ານເຮືອນດ້ວຍຄວາມຍິນດີ ແລະ ຮັບເຂົ້າຢູ່ໃນຈິດໃຈດ້ວຍຄວາມຊື່ນບານ. *{GC 71.2}*

ເຜີຍຫຼັກແທ້ແຫ່ງຂ່າວປະເສີດ

ຊາວໂວດົວຖືວ່າ ພຣະຄຳພີບໍ່ພຽງແຕ່ເປັນການບັນທຶກປະຫວັດສາດເລື່ອງການຕິດຕໍ່ສຳພັນລະຫວ່າງພຣະເຈົ້າກັບມະນຸດໃນອະດີດ ຫຼື ການເປີດເຜີຍໜ້າທີ່ຂອງຄົນໃນປັດຈຸບັນເທົ່ານັ້ນ ແຕ່ມີການສຳແດງໄພອັນຕະລາຍ ແລະ ສະຫງ່າຣາສີຂອງອະນາຄົດນຳ. ພວກເຂົາເຊື່ອວ່າການສິ້ນສຸດຂອງສິ່ງທັງປວງໃກ້ເຂົ້າມາແລ້ວ ແລະ ໃນຂະນະທີ່ສຶກສາພຣະຄຳພີດ້ວຍນ້ຳຕາ ແລະ ການອະທິຖານກໍຍິ່ງຮູ້ສຶກຢ່າງເລິກເຊິ່ງວ່າ ຖ້ອຍຄຳໃນພຣະຄຳພີນັ້ນລ້ຳຄ່າ, ພວກເຂົາຮູ້ສຶກວ່າຕົນມີໜ້າທີ່ໃນການເປີດເຜີຍຄວາມຈິງເລື່ອງຄວາມລອດພົ້ນທີ່ຂຽນໄວ້ໃນພຣະຄຳພີໃຫ້ຄົນອື່ນໄດ້ຮູ້. ຊາວໂວດົວເຫັນວ່າແຜນການຊ່ວຍມະນຸດໃຫ້ລອດໄດ້ຂຽນໄວ້ຢ່າງແຈ່ມແຈ້ງຢູ່ໃນພຣະຄຳຂອງພຣະເຈົ້າ, ພວກເຂົາຈຶ່ງໄດ້ຮັບການປອບໃຈ, ຄວາມຫວັງ ແລະ ສັນຕິສຸກດ້ວຍການໄວ້ວາງໃຈໃນພຣະເຢຊູ. ພຣະຄຳພີສ່ອງສະຫວ່າງເຂົ້າໄປໃນຈິດໃຈຂອງພວກເຂົາ ເຮັດໃຫ້ມີຄວາມເຂົ້າໃຈ ແລະ ເກີດຄວາມຊົ່ມຊື່ນຍິນດີ. ພວກເຂົາຈຶ່ງປາຖະໜາທີ່ຈະສ່ອງຄວາມສະຫວ່າງດັ່ງກ່າວໃຫ້ຄົນທັງຫຼາຍທີ່ຢູ່ໃນຄວາມມືດຍ້ອນຄຳສອນອັນຜິດພ້ຽນຂອງລະບອບສັນຕະປາປາ. *{GC 72.1}*

ຊາວໂວດົວເຫັນວ່າ ຄົນຈຳນວນຫຼວງຫຼາຍກຳລັງຫຼົງຄຳສອນຂອງສັນຕະປາປາ ແລະ ພວກບາດຫຼວງ ຈົນພວກເຂົາເຖິງກັບທໍລະມານຮ່າງກາຍຕົນເອງດ້ວຍຄວາມຫວັງວ່າ ຈະໄດ້ຮັບການອະໄພບາບຈາກພຣະເຈົ້າ. ປະຊາຊົນຖືກສອນໃຫ້ເພິ່ງໃນບຸນກຸສົນຂອງຕົນເອງ; ສະນັ້ນ, ພວກເຂົາຈຶ່ງເບິ່ງ

[5] ໄວລີ (Wylie), ເຫຼັ້ມ 1, ບົດ 7.

ຢູ່ທີ່ຕົວເອງ ແລະ ຄິດຄຳນຶງເຖິງສະພາບຄວາມຜິດບາບຂອງຕົນຢູ່ຕະຫຼອດເວລາ. ພວກເຂົາຮູ້ສຶກ ວ່າ ຈະຕ້ອງຖືກພຣະເຈົ້າລົງໂທດຢ່າງແນ່ນອນ ຈຶ່ງທໍລະມານທັງກາຍທັງໃຈຂອງຕົນ, ແຕ່ຄວາມຮູ້ສຶກ ນັ້ນບໍ່ໄດ້ຮັບການບັນເທົາ. ສະນັ້ນ, ຄົນທີ່ມີໃຈສຳນຶກໃນຄວາມບາບ ຈຶ່ງຖືກຄວບຄຸມດ້ວຍຄຳສອນຂອງ ຄຣິສຕະຈັກໂຣມ. ມີຫຼາຍພັນຄົນປະຍາດຕີພີ່ນ້ອງກັບໝູ່ເພື່ອນ ໄປໃຊ້ຊີວິດໃນຫ້ອງຄັບແຄບຂອງສຳນັກ ນັກບວດ. ຫຼາຍຄັ້ງພວກເຂົາອົດອາຫານ, ຕີຕົວເອງດ້ວຍແສ້, ເຝົ້າອະທິຖານຍາມທ່ຽງຄືນ, ນອນ ຂາບໄຫວ້ຢູ່ຫຼາຍຊົ່ວໂມງເທິງພື້ນຫີນທີ່ປຸງກເຢັນ, ເດີນທາງອັນຍາວໄກເພື່ອສະແຫວງບຸນ, ບຳເພັນຕົນ ຢ່າງໜ້າອັບອາຍ ແລະ ທໍລະມານຕົນຢ່າງເປັນຕາໜ້າຢ້ານ, ທັງໝົດນີ້ກໍເພື່ອຫາສັນຕິສຸກໃນຈິດໃຈ ແຕ່ ກໍບໍ່ໄດ້ພົບສັນຕິສຸກດັ່ງກ່າວ. ການສຳນຶກໃນຄວາມບາບໄດ້ບີບຄັ້ນຈິດໃຈຂອງຄົນເຫຼົ່ານີ້, ພວກເຂົາຢ້ານ ຄວາມໂກດຮ້າຍຂອງພຣະເຈົ້າ ຈຶ່ງອົດທົນຕໍ່ໄປ. ຫຼາຍຄົນທົນທຸກທໍລະມານຈົນສັງຂານທົນຕໍ່ບໍ່ໄດ້ ແລ້ວ ກໍລົງໄປຍັງຂຸມຝັງສົບໂດຍບໍ່ໄດ້ຮັບແສງແຫ່ງຄວາມຫວັງແຕ່ຢ່າງໃດ. *{GC 72.2}*

ຊາວໂວດົວປາຖະໜາທີ່ຈະແບ່ງປັນອາຫານແຫ່ງຊີວິດໃຫ້ແກ່ຄົນເຫຼົ່ານີ້ ທີ່ມີຈິດວິນຍານໃກ້ອົດຕາຍ ເຕັມທີ່, ຢາກນຳພຣະສັນຍາຂອງພຣະເຈົ້າເລື່ອງສັນຕິສຸກມາເປີດເຜີຍ ແລະ ແນະນຳໃຫ້ພວກເຂົາຮູ້ຈັກ ພຣະຄຣິສໃນຖານະຄວາມຫວັງດຽວທີ່ຈະໄດ້ຮັບຄວາມລອດພົ້ນ. ຊາວໂວດົວເຊື່ອວ່າ ຄຳສອນທີ່ມະນຸດ ສາມາດລົບລ້າງຄວາມບາບຂອງຕົນໄດ້ດ້ວຍການທຳບຸນນັ້ນເປັນຄຳສອນທີ່ຜິດ. ການເພິ່ງໃນບຸນກຸສົນ ຂອງມະນຸດໄດ້ປິດບັງຄວາມຮັກອັນຍິ່ງໃຫຍ່ຂອງພຣະຄຣິສ. ພຣະເຢຊູສິ້ນພຣະຊົນໃນຖານະເຄື່ອງຖວາຍ ໄຖ່ບາບ ເພາະວ່າມະນຸດສະໂລກທີ່ຕົກຢູ່ໃນຄວາມບາບບໍ່ສາມາດເຮັດສິ່ງໃດໄດ້ເພື່ອເປັນທີ່ຍອມຮັບ ຂອງພຣະເຈົ້າ. ຄຸນຄວາມດີຂອງພຣະຜູ້ຊ່ວຍໃຫ້ລອດທີ່ຖືກຄຶງໄວ້ເທິງໄມ້ກາງແຂນ ແລະ ຊົງຟື້ນຈາກ ຄວາມຕາຍ ເປັນຮາກຖານຄວາມເຊື່ອຂອງຄຣິສຕຽນ. ຄຣິສຕຽນຕ້ອງໃກ້ຊິດຕິດແໜບກັບພຣະຄຣິສຢ່າງ ແທ້ຈິງ ເຊັ່ນດຽວກັບແຂນຂາທີ່ຕິດຢູ່ກັບຮ່າງກາຍ ແລະ ກິ່ງກ້ານທີ່ຕິດຢູ່ກັບເຄືອອະງຸ່ນ. *{GC 73.1}*

ສັນຕະປາປາໃນແຕ່ລະສະໄໝ ພ້ອມດ້ວຍພວກບາດຫຼວງທັງຫຼາຍ ໄດ້ສອນປະຊາຊົນໃຫ້ຖືວ່າ ພຣະເຈົ້າລວມເຖິງພຣະຄຣິສເອງມີອຸປະນິໄສທີ່ເຂັ້ມງວດ, ເສົ້າໝອງ ແລະ ເປັນຕາຢ້ານ. ພວກເຂົາ ສອນວ່າ ພຣະຜູ້ຊ່ວຍໃຫ້ລອດບໍ່ມີຄວາມອີ່ຕົນສົງສານຕໍ່ມະນຸດຜູ້ຫຼົງໃນຄວາມບາບແຕ່ຢ່າງໃດ ຈຶ່ງຕ້ອງ ຂໍໃຫ້ພວກບາດຫຼວງ ແລະ ນັກບຸນຊ່ວຍໄກ່ເກ່ຍ. ສ່ວນຄົນທີ່ໄດ້ຮັບຄວາມສະຫວ່າງຈາກພຣະຄຳ ຂອງພຣະເຈົ້າ ກໍຢາກແນະນຳໃຫ້ຄົນເຫຼົ່ານີ້ໄດ້ຮູ້ຈັກພຣະເຢຊູ ວ່າພຣະອົງເປັນພຣະຜູ້ຊ່ວຍໃຫ້ລອດຂອງ ພວກເຂົາທີ່ຊົງຮັກ ແລະ ຊົງເມດຕາພວກເຂົາຢູ່. ພຣະອົງຊົງອ້າແຂນເຊື້ອເຊີນ ໃຫ້ຄົນທັງຫຼາຍນຳເອົາ ພາລະແຫ່ງຄວາມບາບ, ຄວາມທຸກກັງວົນ ແລະ ຄວາມອິດເມື່ອຍມາຫາພຣະອົງ. ຄົນທີ່ຮູ້ພຣະຄຳພີ ປາຖະໜາເອົາອຸປະສັກທັງຫຼາຍນີ້ອອກໄປ ຄືອຸປະສັກທັງຫຼາຍທີ່ຊາຕານກໍວ່ໄວ້ເພື່ອບົດບັງຕາຜູ້ຄົນບໍ່ ໃຫ້ເຫັນພຣະສັນຍາຂອງພຣະເຈົ້າ. ຊາຕານຫວັງວ່າ ອຸປະສັກເຫຼົ່ານີ້ຈະເປັນເຫດໃຫ້ເຂົາທັງຫຼາຍບໍ່ມາ ຫາພຣະອົງໂດຍກົງ, ເພາະຖ້າເຂົ້າມາຫາພຣະອົງ ແລະ ສາລະພາບຄວາມຜິດບາບແລ້ວ ກໍຈະໄດ້ຮັບ ການອະໄພ ແລະ ມີສັນຕິສຸກໃນໃຈ. *{GC 73.2}*

ຜູ້ປະກາດຊາວໂວດົວໄດ້ເປີດເຜີຍຄວາມຈິງເລື່ອງຂ່າວປະເສີດດ້ວຍຄວາມກະຕືລືລົ້ນໃຫ້ແກ່ຄົນທີ່ ສົນໃຈ ແລະ ໄດ້ນຳເອົາເອກະສານພຣະຄຳພີອອກມາຢ່າງລະມັດລະວັງ. ຄວາມສຸກທີ່ຍິ່ງໃຫຍ່ທີ່ສຸດ ຂອງຜູ້ປະກາດເຫຼົ່ານັ້ນ ແມ່ນການໃຫ້ຄວາມຫວັງແກ່ຄົນທີ່ສຳນຶກໃນຄວາມບາບ ຄືການໃຫ້ຄວາມຫວັງ ກັບຄົນທີ່ເຂົ້າໃຈພຣະເຈົ້າຜິດວ່າພຣະອົງເປັນພຣະເຈົ້າແຫ່ງການແກ້ແຄ້ນທີ່ຊອກຫາໂອກາດລົງໂທດຄົນ ບາບ. ພວກເຂົາແບ່ງປັນໃຫ້ພີ່ນ້ອງຮູ້ເຖິງພຣະສັນຍາອັນລ້ຳຄ່າທີ່ເປີດເຜີຍຄວາມຫວັງດຽວຂອງຄົນບາບ ດ້ວຍນ້ຳສຽງທີ່ສັ່ນ, ນ້ຳຕາໄຫຼ ແລະ ມີບາງຄັ້ງພວກເຂົາເຖິງກັບຄູ້ເຂົ່າເວົ້າ. ສະນັ້ນ, ແສງແຫ່ງຄວາມຈິງ ຈຶ່ງສ່ອງເຂົ້າໄປໃນໃຈຂອງຫຼາຍຄົນທີ່ຢູ່ໃນຄວາມມືດ ແລະ ກຳຈັດປັດເປົ່າຄວາມມືດມົນນັ້ນອອກໄປ ຈົນ

ແສງຕາເວັນແຫ່ງຄວາມຊອບທຳ ກໍຄືພຣະເຢຊູຄຣິສ ໄດ້ສ່ອງເຂົ້າໄປປິ່ນປົວຈິດໃຈ.[6] ຫຼາຍຄັ້ງຄົນຟັງຂໍໃຫ້ອ່ານຂໍ້ພຣະຄຳພີຊ້ຳຫຼາຍ ໆ ເທື່ອ ເພາະຕ້ອງການຄວາມໝັ້ນໃຈວ່າໄດ້ຍິນຄັກແນ່. ຖ້ອຍຄຳທີ່ມີຄົນຢາກໄດ້ຍິນຊ້ຳເປັນພິເສດແມ່ນ: “ພຣະໂລຫິດຂອງພຣະເຢຊູເຈົ້າ ພຣະບຸດຂອງພຣະອົງ ກໍຊຳລະເຮົາ ທັງຫຼາຍຈາກການຜິດບາບທັງສິ້ນ.” (1 ໂຢຮັນ 1:7). ແລະ “ໂມເຊໄດ້ຍົກງູຂຶ້ນໃນຖິ່ນແຫ້ງແລ້ງກັນດານ ສັນໃດ ບຸດມະນຸດຈະຕ້ອງຖືກຍົກຂຶ້ນສັນນັ້ນ ເພື່ອຜູ້ໃດທີ່ເຊື່ອວາງໃຈໃນພຣະອົງຈະບໍ່ພິນາດ ແຕ່ມີຊີວິດນິຣັນ.” (ໂຢຮັນ 3:14, 15 ດັດແປງຈາກສະບັບ TKJV). *{GC 73.3}*

ຫຼາຍຄົນທີ່ເຄີຍຫຼົງເຊື່ອຄຳສອນຂອງຄຣິສຕະຈັກໂຣມກໍຕາສະຫວ່າງຂຶ້ນ. ພວກເຂົາເຫັນວ່າ ການທີ່ຫວັງເພິ່ງພາມະນຸດ ຫຼື ທູດສະຫວັນເພື່ອນຳຄົນບາບໃຫ້ກັບຄືນດີກັບພຣະເຈົ້າ ເປັນເລື່ອງທີ່ບໍ່ເກີດປະໂຫຍດ. ໃນຂະນະທີ່ຄວາມສະຫວ່າງແທ້ສ່ອງເຂົ້າໄປໃນໃຈ ພວກເຂົາກໍກ່າວດ້ວຍຄວາມຊົມຊື່ນຍິນດີວ່າ, ‘ພຣະຄຣິສຊົງເປັນປະໂຣຫິດຂອງຂ້າພະເຈົ້າ; ພຣະໂລຫິດຂອງພຣະອົງແມ່ນເຄື່ອງໄຖ່ບາບຂອງຂ້າພະເຈົ້າ; ຂ້າພະເຈົ້າຈະສາລະພາບຄວາມບາບຕໍ່ພຣະອົງແຕ່ຜູ້ດຽວ.’ ພວກເຂົາເພິ່ງພາໃນຄຸນຄວາມດີຂອງພຣະເຢຊູຢ່າງສິ້ນເຊີງ ໂດຍທົບທວນຂໍ້ພຣະຄຳພີວ່າ, “ຖ້າບໍ່ມີຄວາມເຊື່ອແລ້ວ ຈະເປັນທີ່ພໍພຣະໄທພຣະເຈົ້າບໍ່ໄດ້.” (ເຮັບເຣີ 11:6). “ໃນຜູ້ອື່ນຄວາມລອດພົ້ນບໍ່ມີ ດ້ວຍວ່າ, ບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າ ທີ່ຊົງປະທານແກ່ມະນຸດ ເພື່ອໃຫ້ເຮົາທັງຫຼາຍຕ້ອງໄດ້ພົ້ນ.” (ກິດຈະການ 4:12). *{GC 74.1}*

ຄົນເຫຼົ່ານັ້ນທີ່ເຄີຍຖືກລົ້ມພະຍຸພັດພາໂດຍບໍ່ມີທີ່ເພິ່ງ ເກືອບເຖິງຂັ້ນຊັອກເມື່ອໄດ້ຍິນວ່າພຣະຜູ້ຊ່ວຍ-ໃຫ້ລອດຊົງຮັກເຂົາ. ຄວາມບັນເທົາທີ່ໄດ້ຮັບນັ້ນໃຫຍ່ຫຼວງ ແລະ ແສງສະຫວ່າງອັນສົດໃສທີ່ສ່ອງເຂົ້າໄປໃນໃຈຍິ່ງໃຫຍ່ ຈົນເຮັດໃຫ້ພວກເຂົາຮູ້ສຶກວ່າ ເໝືອນໄດ້ຖືກຮັບໄປສະຫວັນທັງເປັນ. ພວກເຂົາວາງມືຂອງຕົນໄວ້ໃນພຣະຫັດຂອງພຣະຄຣິສດ້ວຍຄວາມໝັ້ນໃຈ ແລະ ຢືນຢັດເທິງພຣະສັນຍາໝັ້ນຄົງ. ຄວາມຢ້ານກົວຕໍ່ຄວາມຕາຍຫາຍໄປໝົດ. ບັດນີ້ພວກເຂົາສາມາດຍິນດີກັບການຕິດຄຸກ ຫຼື ການຖືກປະຫານຊີວິດດ້ວຍການເຜົາໄຟ ຖ້າຫາກວ່າສິ່ງເຫຼົ່ານີ້ຈະຊ່ວຍຖວາຍກຽດແດ່ພຣະຜູ້ໄຖ່ຂອງຕົນ. *{GC 74.2}*

ດ້ວຍເຫດນີ້, ພວກຜູ້ປະກາດຈຶ່ງນຳເອົາພຣະຄຳຂອງພຣະເຈົ້າມາອ່ານໃຫ້ຄົນຟັງໃນບ່ອນລັບ, ບາງຄັ້ງແມ່ນອ່ານໃຫ້ຄົນດຽວຟັງ ບາງຄັ້ງແມ່ນອ່ານໃຫ້ກຸ່ມນ້ອຍ ໆ ທີ່ປາຖະໜາແສງແຫ່ງຄວາມຈິງ. ຫຼາຍຄັ້ງພວກເຂົາອ່ານພຣະຄຳພີແບບນີ້ຕະຫຼອດທັງຄືນ. ຄົນຟັງທັງຕະລຶງທັງປະທັບໃຈ ຈົນຫຼາຍຄັ້ງຜູ້ປະກາດຄວາມເມດຕາຕ້ອງຢຸດການອ່ານຊົ່ວຄາວ ເພື່ອໃຫ້ຜູ້ຟັງຊຶມຊັບເຖິງຄວາມໝາຍເລື່ອງຄວາມລອດພົ້ນ. ຫຼາຍຄັ້ງມີຄົນຖາມແບບນີ້ວ່າ: “ພຣະເຈົ້າຈະຮັບເອົາຂອງຖວາຍຂອງ*ຂ້ານ້ອຍ*ແທ້ບໍ? ພຣະອົງຈະຍິນດີນຳ*ຂ້ານ້ອຍ* ແລະ ໃຫ້ອະໄພ*ຂ້ານ້ອຍ*ແທ້ບໍ?” ແລ້ວຜູ້ປະກາດກໍຈະອ່ານຄຳຕອບຈາກພຣະຄຳພີວ່າ: “ບັນດາຜູ້ທີ່ເຮັດການໜັກໜ່ວງ ແລະ ແບກພາລະໜັກ ຈົ່ງມາຫາເຮົາ ແລະ ເຮົາຈະໃຫ້ພວກເຈົ້າໄດ້ຮັບຄວາມເຊົາເມື່ອຍ.” (ມັດທາຍ 11:28). *{GC 74.3}*

ພວກເຂົາຕອບຮັບພຣະສັນຍາດ້ວຍຄວາມເຊື່ອວ່າ: “ຂ້ານ້ອຍບໍ່ຕ້ອງເດີນທາງໄກຢ່າງເຈັບປວດ ເພື່ອສະແຫວງບຸນຢູ່ບ່ອນສັກສິດ. ຂ້ານ້ອຍສາມາດເຂົ້າຫາພຣະເຢຊູໂດຍກົງໃນສະພາບທີ່ຂ້ານ້ອຍເປັນຢູ່ ຄື ໃນຖານະຄົນບາບທີ່ເປັນມົນທິນ, ແລ້ວພຣະອົງຈະບໍ່ປະຕິເສດຄຳອະທິຖານສາລະພາບບາບ ແຕ່ຈະຊົງກ່າວວ່າ: ‘ບາບຂອງເຈົ້າໄດ້ຮັບການອະໄພແລ້ວ’ ຄືຄວາມບາບຂອງຂ້ານ້ອຍເອງສາມາດໄດ້ຮັບການອະໄພ.” *{GC 75.1}*

ແລ້ວຄວາມຊົມຊື່ນຍິນດີກໍເຕັມລົ້ນຫົວໃຈ ຈົນມີການຮ້ອງສັນລະເສີນ ແລະ ຂອບຄຸນພຣະນາມຂອງພຣະເຢຊູ. ຄົນເຫຼົ່ານີ້ເມື່ອເຮືອນດ້ວຍໃຈຊື່ນບານ ເພື່ອກະຈາຍແສງສະຫວ່າງຕໍ່ໄປ ແລະ ເວົ້າຢ່າງເຕັມ

[6] ເບິ່ງ ມາລາກີ 4:2.

ຄວາມສາມາດໃຫ້ຄົນອື່ນຟັງເຖິງປະສົບການໃໝ່ຂອງຕົນວ່າ ພວກເຂົາໄດ້ພົບທາງແຫ່ງຊີວິດອັນແທ້ຈິງ ແລ້ວ. ພຣະຄຳຂອງພຣະເຈົ້າມີຣິດອຳນາດຢ່າງອັດສະຈັນ ເຊິ່ງເຂົ້າເຖິງຈິດໃຈຂອງຜູ້ທີ່ປາຖະໜາຄວາມ ຈິງໂດຍກົງ ແລະ ບໍ່ຕ້ອງຜ່ານສື່ກາງໃດໆ; ພຣະຄຳນັ້ນແມ່ນພຣະສຸຣະສຽງຂອງພຣະເຈົ້າທີ່ເຮັດໃຫ້ຜູ້ ຟັງສຳນຶກໃນຄວາມບາບ. *{GC 75.2}*

ແລ້ວຜູ້ປະກາດຄວາມຈິງກໍເດີນທາງຕໍ່ໄປ; ສ່ວນຊາວບ້ານມັກເວົ້າເຖິງຄວາມຖ່ອມໂຕ, ຄວາມ ຈິງໃຈ ແລະ ຄວາມກະຕືລືລົ້ນຂອງລາວ. ຫຼາຍຄັ້ງຜູ້ຟັງບໍ່ໄດ້ຖາມຜູ້ປະກາດວ່າ ລາວມາແຕ່ ໃສ ແລະ ກຳລັງຈະໄປບ່ອນໃດ ຍ້ອນວ່າທຳອິດເມື່ອໄດ້ຍິນຂ່າວປະເສີດກໍຮູ້ສຶກຕົກໃຈ, ຕໍ່ມາມີຄວາມ ຊົມຊື່ນຍິນດີ ແລະ ຄວາມຮູ້ສຶກຊາບຊຶ້ງເຕັມລົ້ນຫົວໃຈຈົນລືມທີ່ຈະຖາມລາວ. ເມື່ອຜູ້ຟັງແຕ່ລະຄົນ ວິງວອນໃຫ້ລາວກັບໄປທີ່ບ້ານເຮືອນຂອງພວກເຂົາ ລາວຕອບວ່າ ຈະຕ້ອງໄປຫາລູກແກະທີ່ຫຼົງຫາຍ ໄປ. ພວກເຂົາຈຶ່ງຖາມກັນວ່າ ເປັນໄປໄດ້ບໍ່ວ່າລາວແມ່ນທູດສະຫວັນ? *{GC 75.3}*

ຫຼາຍຄັ້ງຜູ້ປະກາດຄວາມຈິງເດີນທາງໄປໂດຍບໍ່ກັບມາປາກົດໃຫ້ເຫັນອີກ, ບາງຄັ້ງແມ່ນຍ້ອນວ່າ ລາວໄປປະກາດຢູ່ຕ່າງແດນ ຫຼືວ່າ ອາດເປັນເພາະລາວຖືກຈັບຂັງໃຫ້ຕ້ອງໃຊ້ຊີວິດທີ່ເຫຼືອຢູ່ໃນຄຸກ ໃຕ້ດິນ ຫຼືວ່າ ກະດູກຂາວຂອງລາວກຳລັງປະດັບບ່ອນທີ່ລາວຖືກຂ້າຍ້ອນເປັນພະຍານຝ່າຍຄວາມ ຈິງ. ແຕ່ວ່າຖ້ອຍຄຳທີ່ລາວປະກາດໄວ້ກໍບໍ່ສາມາດຖືກທຳລາຍໄດ້; ຖ້ອຍຄຳເຫຼົ່ານັ້ນກຳລັງອອກຣິດໃນ ຈິດໃຈຂອງຜູ້ຄົນ ເຊິ່ງຜົນຂອງການປະກາດນັ້ນຈະບໍ່ປາກົດໃຫ້ຮູ້ທັງໝົດ ຈົນເຖິງວັນເວລາແຫ່ງການ ພິພາກສາ. *{GC 75.4}*

ຝ່າຍສັນຕະປາປາກົດຂີ່ຂົ່ມເຫັງ

ຜູ້ປະກາດຊາວໂວດົວກຳລັງບຸກເຂົ້າໄປໃນອານາຈັກຂອງຊາຕານ ອຳນາດມືດຈຶ່ງຕື່ນຕົວລະວັງຫຼາຍ ຂຶ້ນ. ຊາຕານເຝົ້າສັງເກດທຸກຄັ້ງທີ່ມີຄົນພະຍາຍາມປະກາດຄວາມຈິງ ມັນຈຶ່ງກະຕຸ້ນໃຫ້ຜູ້ຮັບໃຊ້ຂອງ ມັນຕົກໃຈຢ້ານ. ພວກຜູ້ນຳໃນລະບອບສັນຕະປາປາເຫັນວ່າ ວຽກງານຂອງຜູ້ປະກາດທີ່ໃຊ້ຊີວິດຢ່າງ ສະມະຖະລຽບງ່າຍ ມີຄວາມອັນຕະລາຍຫຼາຍຕໍ່ລະບອບຂອງຕົນ. ຖ້າປ່ອຍໃຫ້ແສງແຫ່ງຄວາມຈິງ ສ່ອງອອກໄປໂດຍບໍ່ປິດບັງແລ້ວ ເມກໝອກອັນມືດດຳແຫ່ງຄວາມເທັດທີ່ປົກຄຸມປະຊາຊົນກໍຈະລະລາຍ ໄປ, ຄົນທັງຫຼາຍກໍຈະຫັນໄປເພິ່ງພຣະເຈົ້າແຕ່ພຽງຜູ້ດຽວ ແລ້ວສຸດທ້າຍອຳນາດຂອງຄຣິສຕະຈັກໂຣມກໍ ຈະໝົດໄປ. *{GC 76.1}*

ການທີ່ຊາວໂວດົວຍຶດໝັ້ນໃນຄວາມເຊື່ອຂອງຄຣິສຕະຈັກຍຸກອັກຄະສາວົກນັ້ນ ເໝືອນເປັນຄຳ ພະຍານທີ່ກ່າວໄວ້ຕະຫຼອດເວລາວ່າ ຄຣິສຕະຈັກໂຣມໄດ້ຫຼົງຈາກຄວາມຈິງ; ສະນັ້ນ, ຈຶ່ງເກີດຄວາມ ກຽດຊັງ ແລະ ການກົດຂີ່ຂົ່ມເຫັງຢ່າງຂົມຂື່ນ. ການທີ່ຊາວໂວດົວບໍ່ຍອມປະຖິ້ມພຣະຄຳພີ ເປັນອີກ ເລື່ອງໜຶ່ງທີ່ແທງໃຈດຳຄົນໃນຄຣິສຕະຈັກໂຣມ ຈົນພວກເຂົາທົນບໍ່ໄດ້. ສະນັ້ນ, ຝ່າຍສັນຕະປາປາຈຶ່ງ ໝາຍໝັ້ນປັ້ນມືທີ່ຈະລົບລ້າງຊາວໂວດົວຈົນໝົດກ້ຽງບໍ່ເຫຼືອຫຼໍ! ບັດນີ້ຈຶ່ງເກີດສົງຄາມສາສະໜາຕໍ່ສູ້ຄົນ ຂອງພຣະເຈົ້າທີ່ອາໄສຕາມພູເຂົາ ເຊິ່ງເປັນການຕໍ່ສູ້ທີ່ຮຸນແຮງທີ່ສຸດ. ມີເຈົ້າໜ້າທີ່ສານຄະດີນອກຣີດ ສະກົດຮອຍຂອງພວກເຂົາ ແລະ ເຫດການທີ່ອາເບັນຜູ້ບໍ່ມີຄວາມຜິດຖືກກາອິນຜູ້ຄຸມເຄ້ນຂ້າຕາຍ ນັ້ນ ຈຶ່ງເກີດຂຶ້ນຊ້ຳຊາກ. *{GC 76.2}*

ໄຮ່ນາອັນອຸດົມສົມບູນຂອງພວກເຂົາຖືກທຳລາຍຫຼາຍເທື່ອ ແລະ ບ້ານເຮືອນກັບໂບດວິຫານກໍຖືກ ມ້າງລົງຊ້ຳແລ້ວຊ້ຳອີກ ຈົນໄຮ່ນາຕາກ້າທີ່ເຄີຍອຸດົມສົມບູນ ພ້ອມກັບບ້ານເຮືອນຂອງຄົນບໍຣິສຸດທີ່ ຂະໜາຍັນໝັ້ນພຽນ ກາຍເປັນບ່ອນແຫ້ງແລ້ງກັນດານ. ເສືອຍິ່ງດຸຮ້າຍຂຶ້ນເມື່ອດົມກິ່ນເລືອດສັນໃດ ພວກ ຝ່າຍສັນຕະປາປາຍິ່ງໂຫດຮ້າຍຂຶ້ນ ເມື່ອເຫັນຄວາມທຸກທໍລະມານຂອງເຫຍື່ອຂອງພວກເຂົາສັນນັ້ນ.

ຫຼາຍຄົນທີ່ເປັນພະຍານຝ່າຍຄວາມເຊື່ອອັນບໍຣິສຸດຖືກໄລ່ລ່າຂຶ້ນເຂົາລົງຫ້ວຍ ຕາມພູຜາປ່າດົງທີ່ພວກເຂົາ ຫຼົບລີ້ຊ່ອນຕົວນັ້ນ. {GC 76.3}

ຝ່າຍສັນຕະປາປາບໍ່ສາມາດຫາຂໍ້ກ່າວຫາໃນເລື່ອງສິນທຳຕໍ່ຄົນເຫຼົ່ານີ້ທີ່ຖືກທາງການຫ້າມປາມ. ແມ່ນແຕ່ສັດຕູຂອງພວກເຂົາຕ້ອງຍອມຮັບວ່າ ຊາວໂວດົວຢູ່ຢ່າງສະຫງົບສັນຕິ ແລະ ມີສິນທຳ. ຄວາມ ຜິດອັນໃຫຍ່ຫຼວງຂອງພວກເຂົາແມ່ນ ຊາວໂວດົວບໍ່ຍອມນະມັດສະການພຣະເຈົ້າຕາມໃຈມັກຂອງສັນຕະ-ປາປາ ແລະ ເພາະຄວາມຜິດໃນເລື່ອງນີ້ ພວກເຂົາຈຶ່ງໄດ້ຮັບຄວາມອັບອາຍຂາຍໜ້າ, ຖືກດູຖູກ ຢຽດຢາມ ແລະ ຖືກທໍລະມານໃນທຸກຮູບແບບທີ່ມະນຸດ ແລະ ຜີມານຊາຕານສາມາດຄິດຄົ້ນມາ ໄດ້. {GC 76.4}

ເມື່ອຄຣິສຕະຈັກໂຣມຕັດສິນໃຈທີ່ຈະລົບລ້າງກຸ່ມຜູ້ເຊື່ອທີ່ພວກເຂົາກຽດຊັງນັ້ນ ສັນຕະປາປາຈຶ່ງອອກ ຄຳປະກາດກ່າວໂທດຊາວໂວດົວວ່າ ເປັນພວກນອກຮີດ ແລະ ສັ່ງໃຫ້ຂ້າພວກເຂົາຖິ້ມ. ພວກເຂົາບໍ່ໄດ້ ຖືກກ່າວຫາວ່າເປັນຄົນຂີ້ຄ້ານບໍ່ຍອມເຮັດວຽກ ແລະ ກໍບໍ່ໄດ້ຖືກລົງໂທດຍ້ອນຂີ້ຕົວະ ຫຼື ເພາະກໍ່ຄວາມ ວຸ້ນວາຍແຕ່ປະການໃດ, ແຕ່ຖືກກ່າວຫາວ່າເປັນຄົນໜ້າໄຫວ້ຫຼັງຫຼອກ ເບິ່ງຄືມີສິນທຳ ແລະ ຄວາມ ບໍຣິສຸດຈົນເປັນເຫດໃຫ້ “ລູກແກະແຫ່ງຄອກທີ່ແທ້ຈິງ” ຫຼົງເຊື່ອ. ສະນັ້ນ, ສັນຕະປາປາຈຶ່ງສັ່ງ ວ່າ ຖ້າຫາກ “ພວກເສດມະນຸດທີ່ເປັນຕາຊັງທີ່ສຸດບໍ່ຍອມເລີກເສຍ ໃຫ້ຕີຕາຍເໝືອນຂ້າງູພິດ.”[7] ແລ້ວ ສັນຕະປາປາບໍ່ຮູ້ບໍວ່າ ເພິ່ນຈະຕ້ອງຮັບຜິດຊອບຕໍ່ຖ້ອຍຄຳເຫຼົ່ານີ້ອີກ? ເພິ່ນບໍ່ຮູ້ບໍວ່າ ຖ້ອຍຄຳເຫຼົ່ານີ້ ຖືກບັນທຶກໄວ້ໃນສະຫວັນ ແລະ ເພິ່ນຈະຕ້ອງປະເຊີນໜ້າກັບມັນໃນວັນພິພາກສາ? ພຣະເຢຊູຊົງ ກ່າວວ່າ, “ເມື່ອພວກເຈົ້າໄດ້ເຮັດສິ່ງເຫຼົ່ານີ້ແກ່ຜູ້ທີ່ຕ່ຳຕ້ອຍທີ່ສຸດຄົນໜຶ່ງໃນພວກພີ່ນ້ອງເຫຼົ່ານີ້ຂອງ ເຮົາ, ພວກເຈົ້າກໍໄດ້ເຮັດແກ່ເຮົາເໝືອນກັນ.” (ມັດທາຍ 25:40). {GC 77.1}

ຄຳປະກາດຂອງສັນຕະປາປາ ຮຽກຮ້ອງໃຫ້ສະມາຊິກຄຣິສຕະຈັກທຸກຄົນຮ່ວມກັນໃນສົງຄາມສາສະ-ໜາຕໍ່ສູ້ພວກນອກຮີດ. ແລ້ວເພື່ອເປັນແຮງບັນດານໃຈໃຫ້ຄົນທັງຫຼາຍມີສ່ວນໃນວຽກງານອັນໂຫດຮ້າຍ ນັ້ນ, ຄຳປະກາດດັ່ງກ່າວຈຶ່ງຂຽນໄວ້ວ່າ: “ທຸກຄົນທີ່ຮ່ວມໃນສົງຄາມສາສະໜາໃນຄັ້ງນີ້ ຈະບໍ່ຕ້ອງເຮັດ ຕາມຄຳສາບານໃດໆ ທີ່ເຄີຍກ່າວໄວ້ ແລະ ຈະໄດ້ຮັບການຍົກເວັ້ນໂທດ ແລະ ການປັບໃໝຈາກ ຄຣິສຕະຈັກ. ຖ້າເຄີຍໂກງເອົາຊັບສິນຂອງຄົນອື່ນຢ່າງຜິດກົດໝາຍ ຈະບໍ່ຕ້ອງຄືນ ແຕ່ຈະຖືວ່າເປັນ ເຈົ້າຂອງສິ່ງເຫຼົ່ານັ້ນຢ່າງຖືກຕ້ອງ. ສ່ວນຜູ້ໃດຂ້າພວກນອກຮີດຄົນໃດຄົນໜຶ່ງ ກໍຈະໄດ້ຮັບການອະໄພ ບາບທັງໝົດ. ຄຳປະກາດດັ່ງກ່າວໄດ້ຍົກເລີກໃບສັນຍາ ແລະ ຂໍ້ຕົກລົງທຸກຢ່າງທີ່ອຳນວຍຜົນດີໃຫ້ ແກ່ຊາວໂວດົວ ທັງສັ່ງຄົນຮັບໃຊ້ຂອງພວກເຂົາໃຫ້ປະຖິ້ມພວກເຂົາໄປ ແລະ ຫ້າມບໍ່ໃຫ້ຜູ້ໃດຊ່ວຍເຫຼືອ ຊາວໂວດົວບໍ່ວ່າຈະທາງໃດກໍຕາມ; ນອກຈາກນັ້ນ, ກໍມອບສິດໃຫ້ທຸກຄົນສາມາດຢຶດເຂົ້າຂອງຂອງ ພວກເຂົາໄປໄດ້.”[8] ເອກະສານສະບັບນີ້ເປີດເຜີຍໃຫ້ເຫັນໄດ້ຢ່າງຈະແຈ້ງວ່າ ແມ່ນໃຜຢູ່ເບື້ອງຫຼັງສິ່ງ ເຫຼົ່ານີ້, ເພາະໃນເອກະສານດັ່ງກ່າວໄດ້ຍິນສຽງຮ້ອງຄຳລາມຂອງພະຍານາກ ບໍ່ແມ່ນພຣະສຸຣະສຽງຂອງ ພຣະຄຣິສ. {GC 77.2}

ພວກຜູ້ນຳຝ່າຍສັນຕະປາປາບໍ່ຍອມປັບປ່ຽນນິໄສຕາມມາດຕະຖານອັນສຳຄັນແຫ່ງກົດບັນຍັດຂອງ ພຣະເຈົ້າ, ແຕ່ໄດ້ຍົກມາດຕະຖານອື່ນຂຶ້ນແທນຕາມໃຈມັກຂອງຕົນ ແລະ ໝາຍໝັ້ນປັ້ນມືເພື່ອບັງຄັບ ທຸກຄົນໃຫ້ເຮັດຕາມມາດຕະຖານນັ້ນ ເພາະເປັນຄວາມປາຖະໜາຂອງຄຣິສຕະຈັກໂຣມ. ມີເຫດການ ອັນໂຫດຮ້າຍທາລຸນຢ່າງໜ້າສະຫຼົດໃຈທີ່ສຸດເກີດຂຶ້ນ. ພວກບາດຫຼວງ ແລະ ສັນຕະປາປາໃນສະໄໝ ຕ່າງໆ ຜູ້ທີ່ທັງສໍ້ໂກງ ແລະ ໝິ່ນປະໝາດພຣະເຈົ້ານັ້ນ ກຳລັງເຮັດວຽກຕາມທີ່ຊາຕານໄດ້ມອບໝາຍ

[7] ໄວສີ, ເຫຼັ້ມ 16, ບົດ 1.
[8] ໄວສີ, ເຫຼັ້ມ 16, ບົດ 1.

ໃຫ້ເຮັດ. ພວກເຂົາບໍ່ມີຄຳວ່າເມດຕາປານີ. ຈິດໃຈທີ່ຄຶງພຣະຄຣິສເທິງໄມ້ກາງແຂນ ແລະ ຂ້າບັນດາ ອັກຄະສາວົກ ຄືຈິດໃຈທີ່ກະຕຸ້ນໃຫ້ຈັກກະພັດເນໂຣກະຫາຍເລືອດຜູ້ສັດຊື່ໃນສະໄໝຂອງເພິ່ນນັ້ນ ແມ່ນ ຈິດໃຈດຽວກັນທີ່ເຄື່ອນໄຫວໃຫ້ລົບລ້າງຜູ້ທີ່ພຣະເຈົ້າຊົງຮັກໃຫ້ໝົດໄປຈາກໂລກ. {GC 77.3}

ຫວ່ານເມັດພືດແຫ່ງການປະຕິຮູບ

ຊາວໂວດົວຢາເກງພຣະເຈົ້າທ່ານກາງການຖືກກົດຂີ່ຂົ່ມເຫັງເປັນເວລາຫຼາຍສະຕະວັດ ແລະ ຄວາມ ອົດທົນຢ່າງສະເໝີຕົ້ນສະເໝີປາຍຂອງກຸ່ມຜູ້ເຊື່ອດັ່ງກ່າວນັ້ນ ໄດ້ຖວາຍກຽດແດ່ພຣະຜູ້ໄຖ່ຂອງພວກເຂົາ. ເຖິງແມ່ນວ່າມີການເຮັດສົງຄາມສາສະໜາຕໍ່ສູ້ພວກເຂົາຫຼາຍຕໍ່ຫຼາຍເທື່ອ ແລະ ຕ້ອງຖືກຂ້າຕາຍຢ່າງໂຮ້ ມະນຸດສະທຳກໍຕາມ, ແຕ່ຊາວໂວດົວຍັງຄົງສົ່ງຜູ້ປະກາດອອກໄປເຜີຍແຜ່ຄວາມຈິງອັນລ້ຳຄ່າ. ພວກເຂົາ ຖືກໄລ່ລ່າ ແລະ ຂ້າຖິ້ມ ແຕ່ເລືອດຂອງພວກເຂົາເປັນເໝືອນດັ່ງນ້ຳທີ່ຫົດເມັດພືດແຫ່ງຄວາມຈິງທີ່ໄດ້ ຫວ່ານລົງໄປ ແລະ ເມັດພືດເຫຼົ່ານັ້ນໄດ້ງອກຂຶ້ນບັງເກີດຜົນຢ່າງແນ່ນອນ. ສະນັ້ນ, ຊາວໂວດົວເປັນ ພະຍານເພື່ອພຣະເຈົ້າຫຼາຍຮ້ອຍປີກ່ອນທີ່ ມາຕິນ ລູເທີ (Martin Luther) ຈະເກີດ. ພວກເຂົາ ຕ້ອງກະຈັດກະຈາຍຕາມດິນແດນຕ່າງ ໆ ແລະ ຫວ່ານເມັດແຫ່ງການປະຕິຮູບສາສະໜາທີ່ເລີ່ມຂຶ້ນ ໃນສະໄໝຂອງ ທ່ານໄວຄຼິບ (Wycliffe) ເຊິ່ງຕໍ່ມາໄດ້ຢັ່ງຮາກລົງ ແລະ ຂະຫຍາຍຜົນກວ້າງອອກ ໄປໃນສະໄໝຂອງລູເທີ. ສ່ວນຄົນທີ່ຍອມທົນທຸກເພື່ອ “ປະກາດພຣະທຳຂອງພຣະເຈົ້າ ແລະ ເນື່ອງ ດ້ວຍການເປັນພະຍານຝ່າຍພຣະເຢຊູ” (ພຣະນິມິດ 1:9) ກໍຈະນຳການປະຕິຮູບຕໍ່ໄປຈົນເຖິງວາລະ ສຸດທ້າຍ. {GC 78.1}

5

ຈອນ ໄວຄຼິບ

ເຖິງເວລາແປພຣະຄຳພີ

ກ່ອນສະໄໝການປະຕິຮູບສາສະໜາຄັ້ງໃຫຍ່ໃນສະຕະວັດທີ 16 ມີສຳເນົາພຣະຄຳພີຈຳນວນໜ້ອຍທີ່ສຸດ ແຕ່ພຣະເຈົ້າບໍ່ຍອມປ່ອຍໃຫ້ພຣະຄຳຂອງພຣະອົງຖືກທຳລາຍຈົນໝົດກ້ຽງ; ຄວາມຈິງໃນພຣະຄຳພີຈະຕ້ອງບໍ່ຖືກປິດບັງໄວ້ຕະຫຼອດໄປ. ພຣະອົງສາມາດປົດປ່ອຍພຣະຄຳແຫ່ງຊີວິດໄດ້ຢ່າງງ່າຍດາຍ ເໝືອນທີ່ພຣະອົງເຄີຍເປີດປະຕູຄຸກ ເພື່ອໃຫ້ຜູ້ຮັບໃຊ້ຂອງພຣະອົງເປັນອິດສະຫຼະ. ພຣະວິນຍານຂອງພຣະເຈົ້າຊົງດົນໃຈຄົນໃນປະເທດຕ່າງ ໆ ທົ່ວເອີຣົບໃຫ້ຄົ້ນຫາຄວາມຈິງ ເໝືອນຄົນທີ່ຂຸດຄົ້ນຫາຊັບສົມບັດທີ່ເຊື່ອງໄວ້. ພຣະເຈົ້າຊົງນຳຄົນເຫຼົ່ານີ້ໃຫ້ອ່ານພຣະຄຳພີ ພວກເຂົາຈຶ່ງສຶກສາຄົ້ນຄວ້າຖ້ອຍຄຳອັນສັກສິດດ້ວຍໃຈຈົດໃຈຈໍ່. ພວກເຂົາຍົນດີຮັບເອົາແສງສະຫວ່າງແຫ່ງຄວາມຈິງ ບໍ່ວ່າຈະຕ້ອງແລກດ້ວຍສິ່ງໃດກໍຕາມ. ເຖິງແມ່ນວ່າຄົນເຫຼົ່ານີ້ບໍ່ເຂົ້າໃຈທຸກປະເດັນຢ່າງແຈ່ມແຈ້ງ ແຕ່ກໍສາມາດເຂົ້າໃຈຄວາມຈິງຫຼາຍຢ່າງທີ່ຖືກປິດບັງໄວ້ມາແສນນານ. ໃນຖານະຜູ້ປະກາດທີ່ສະຫວັນສົ່ງມາ ພວກເຂົາອອກໄປທຳລາຍໂສ້ແຫ່ງຄວາມເທັດ ແລະ ຄວາມງົມງວາຍ, ແລະຮຽກຮ້ອງໃຫ້ຄົນທີ່ເຄີຍຖືກຄອບງຳ ໃຫ້ລຸກຂຶ້ນຢືນຢັນເຖິງເສລີພາບຂອງຕົນ. *{GC 79.1}*

ນອກຈາກທ່ານກາງຊາວໂອດົວແລ້ວ ເປັນເວລາຫຼາຍຍຸກຫຼາຍສະໄໝທີ່ພຣະຄຳຂອງພຣະເຈົ້າຖືກຈຳກັດໄວ້ໃນພາສາທີ່ມີແຕ່ຜູ້ທີ່ມີການສຶກສາເທົ່ານັ້ນເຂົ້າໃຈໄດ້; ເຖິງເວລາແລ້ວທີ່ພຣະຄຳຂອງພຣະເຈົ້າຈະຖືກແປ ເພື່ອໃຫ້ຄົນໃນດິນແດນຕ່າງ ໆ ໄດ້ອ່ານໃນພາສາຂອງຕົນ. ຍາມທ່ຽງຄືນແຫ່ງສະໄໝຍຸກມືດໄດ້ຜ່ານໄປແລ້ວ ຊົ່ວໂມງແຫ່ງຄວາມມືດມົນກຳລັງເລືອນລາງຈາງຫາຍໄປ ແລະ ສັນຍະລັກແຫ່ງຮຸ່ງອາລຸນທີ່ກຳລັງຈະມາເຖິງ ປາກົດຂຶ້ນໃນຫຼາຍປະເທດ. *{GC 79.2}*

ດາວຮຸ່ງອາລຸນແຫ່ງການປະຕິຮູບສາສະໜາຄັ້ງໃຫຍ່

ໃນສະຕະວັດທີ 14 “ດາວຮຸ່ງອາລຸນແຫ່ງການປະຕິຮູບສາສະໜາຄັ້ງໃຫຍ່” ໄດ້ປາກົດຂຶ້ນຢູ່ປະເທດອັງກິດ ກໍຄືທ່ານຈອນ ໄວຄຼິບ (John Wycliffe). ເພິ່ນເປັນກະບອກສຽງໃນການປະຕິຮູບບໍ່ພຽງແຕ່ສຳລັບປະເທດອັງກິດເທົ່ານັ້ນ ແຕ່ສຳລັບທຸກປະເທດທີ່ມີການນັບຖືສາສະໜາຄຣິສ. ການຄັດຄ້ານຕໍ່ຄຣິສຕະຈັກໂຣມທີ່ເພິ່ນມີໂອກາດປະກາດຢູ່ນັ້ນ ຈະບໍ່ມີວັນຖືກປິດໃຫ້ງຽບອີກຕໍ່ໄປ. ການຄັດຄ້ານຄັ້ງນັ້ນໄດ້ເປີດການຕໍ່ສູ້ ເຊິ່ງສົ່ງຜົນໃຫ້ເກີດການປົດປ່ອຍໃນລະດັບບຸກຄົນ, ຄຣິສຕະຈັກ ແລະ ລະດັບປະເທດ. *{GC 80.1}*

ທ່ານໄວຄຼິບໄດ້ຮັບການສຶກສາສູງ ແລະ ເພິ່ນຖືວ່າການຢຳເກງພຣະເຈົ້າເປັນຈຸດເລີ່ມຕົ້ນແຫ່ງປັນຍາ. ຕອນຮຽນຢູ່ລະດັບວິທະຍາໄລ ເພິ່ນມີຊື່ສຽງໃນດ້ານຄວາມເຊື່ອສັດທາທີ່ແຮງກ້າ, ພ້ອມທັງຄວາມສາມາດຫຼາກຫຼາຍທີ່ໂດດເດັ່ນ ແລະ ເປັນນັກວິຊາການທີ່ຮອບດ້ານ. ດ້ວຍຄວາມຫິວກະຫາຍ

ໃນຄວາມຮູ້ ເພິ່ນໄດ້ພະຍາຍາມທຳຄວາມເຂົ້າໃຈກັບທຸກສາຂາວິຊາ. ເພິ່ນໄດ້ສຶກສາປັດຊະຍາຂອງພວກ ນັກວິຊາການ, ມະຕິຕ່າງ ໆ ຂອງສະພາຄຣິສຕະຈັກ ແລະ ກົດໝາຍຝ່າຍການປົກຄອງ ໂດຍສະເພາະ ທີ່ກ່ຽວຂ້ອງກັບປະເທດຂອງເພິ່ນເອງ. ພື້ນຖານການສຶກສາອັນລ້ຳຄ່າເຫຼົ່ານີ້ ໄດ້ປາກົດໃຫ້ເຫັນຢ່າງ ຊັດເຈນໃນວຽກງານຂອງເພິ່ນໃນໄລຍະຕໍ່ມາ. ການເຂົ້າໃຈຢ່າງຖີ່ຖ້ວນເຖິງຫຼັກປັດຊະຍາໃນຍຸກສະໄໝ ຂອງເພິ່ນ ຊ່ວຍໃຫ້ເພິ່ນສາມາດເປີດເຜີຍຂໍ້ຜິດພາດຂອງປັດຊະຍາດັ່ງກ່າວ, ແລະດ້ວຍການສຶກສາ ກົດໝາຍຂອງຊາດ ແລະ ກົດລະບຽບຂອງຄຣິສຕະຈັກ ເພິ່ນພ້ອມທີ່ຈະມີສ່ວນໃນການຕໍ່ສູ້ຄັ້ງໃຫຍ່ ເພື່ອ ສິດເສລີພາບທາງດ້ານຝ່າຍພົນລະເມືອງ ແລະ ສາສະໜາ. ນອກຈາກທີ່ເພິ່ນສາມາດນຳໃຊ້ພຣະຄຳ ຂອງພຣະເຈົ້າເປັນອາວຸດໃນການຕໍ່ສູ້ ເພິ່ນກໍຍັງເຂົ້າໃຈຫຼັກວິຊາຂອງສະຖາບັນການສຶກສາ ແລະ ຮູ້ ກົນລະຍຸດຕ່າງ ໆ ຂອງພວກນັກວິຊາການ. ໄວຢ໌ບເປັນຄົນສະຫຼາດ ແລະ ມີຄວາມຮອບຮູ້ ຈົນເປັນ ທີ່ເຄົາລົບຕໍ່ທັງຜູ້ເປັນມິດ ແລະ ຜູ້ເປັນສັດຕູ. ພັກພວກຂອງເພິ່ນພໍໃຈທີ່ນັກຕໍ່ສູ້ຂອງພວກເຂົາມີ ຄວາມໂດດເດັ່ນທີ່ສຸດທ່າມກາງປັນຍາຊົນລະດັບຊາດ; ສ່ວນສັດຕູຂອງເພິ່ນ ກໍບໍ່ສາມາດໝິ່ນປະໝາດ ການປະຕິຮູບສາສະໜາດ້ວຍການອ້າງວ່າ ຜູ້ນຳການປະຕິຮູບນັ້ນເປັນຄົນໂງ່ຈ້າ ຫຼື ເປັນຄົນຫົວ ອ່ອນ. *{GC 80.2}*

ເມື່ອໄວຢ໌ບຍັງຮຽນຢູ່ວິທະຍາໄລເພິ່ນເລີ່ມສຶກສາພຣະຄຳພີ. ໃນສະໄໝນັ້ນ ພຣະຄຳພີມີແຕ່ໃນພາສາ ດັ້ງເດີມ ແລະ ມີແຕ່ນັກວິຊາການເທົ່ານັ້ນທີ່ສາມາດເຂົ້າເຖິງແຫຼ່ງຄວາມຈິງເຊິ່ງຖືກປິດບັງໄວ້ຈາກຄົນ ຊົນຊັ້ນທີ່ໄຮ້ການສຶກສາ. ດ້ວຍເຫດນີ້, ຈຶ່ງເປັນການປູທາງໃຫ້ໄວຢ໌ບເຮັດພາລະກິດການປະຕິຮູບໃນ ອະນາຄົດ. ກ່ອນໜ້ານັ້ນເຄີຍມີນັກວິຊາການສຶກສາພຣະຄຳຂອງພຣະເຈົ້າ ແລະ ໄດ້ຄົ້ນພົບຄວາມຈິງ ອັນຍິ່ງໃຫຍ່ເຖິງພຣະຄຸນທີ່ພຣະອົງປະທານມາໂດຍບໍ່ຄິດມູນຄ່າ. ພວກເຂົາໄດ້ເຜີຍແຜ່ເລື່ອງຄວາມຈິງນີ້ ໃນຄຳສອນຂອງຕົນ ແລະ ໄດ້ນຳຄົນອື່ນໃຫ້ຫັນມາຫາພຣະຄຳແຫ່ງຊີວິດ. *{GC 80.3}*

ເມື່ອທ່ານໄວຢ໌ບເລີ່ມສົນໃຈໃນການສຶກສາພຣະຄຳພີ ເພິ່ນໄຕ່ຕອງຢ່າງລະອຽດຖີ່ຖ້ວນ ແບບດຽວກັນ ທີ່ຊ່ວຍໃຫ້ເພິ່ນມີຄວາມຊຳນານໃນຫຼັກວິຊາການຕ່າງ ໆ. ກ່ອນໜ້ານີ້ ເພິ່ນຮູ້ສຶກວ່າຊີວິດຂາດບາງ ສິ່ງບາງຢ່າງທີ່ສຳຄັນ ເຊິ່ງການສຶກສາດ້ານວິຊາການ ແລະ ຫຼັກຄຳສອນຂອງຄຣິສຕະຈັກບໍ່ສາມາດ ຕອບສະໜອງໄດ້. ແຕ່ເພິ່ນພົບວ່າ ພຣະຄຳຂອງພຣະເຈົ້າໃຫ້ຄຳຕອບຢ່າງຈະແຈ້ງ ເຊິ່ງເພິ່ນບໍ່ເຄີຍພົບ ຢູ່ໃນສິ່ງອື່ນມາກ່ອນ ກໍຄືແຜນການແຫ່ງຄວາມລອດ ແລະ ພຣະຄຣິສໃນຖານະຜູ້ແກ້ຄວາມແຕ່ພຽງ ຜູ້ດຽວສຳລັບມະນຸດ. ໄວຢ໌ບຈຶ່ງອຸທິດຕົນໃນການຮັບໃຊ້ພຣະຄຣິສ ແລະ ຕັ້ງໃຈທີ່ຈະປະກາດຄວາມຈິງ ທີ່ເພິ່ນໄດ້ຄົ້ນພົບ. *{GC 81.1}*

ທ່ານໄວຢ໌ບກໍເໝືອນກັບນັກປະຕິຮູບລຸ້ນຫຼັງ ທີ່ເລີ່ມພາລະກິດຂອງຕົນ ໂດຍບໍ່ໄດ້ເຫັນລ່ວງໜ້າ ວ່າມັນຈະນຳໄປສູ່ສິ່ງໃດ. ເພິ່ນບໍ່ໄດ້ຕັ້ງຕົວຕໍ່ຕ້ານຄຣິສຕະຈັກໂຣມ ແຕ່ການອຸທິດຕົນເພື່ອຄວາມ ຈິງໄດ້ນຳເພິ່ນໃຫ້ຂັດແຍ້ງກັບຄວາມເທັດຢ່າງຫຼີກລ່ຽງບໍ່ໄດ້. ຍິ່ງເພິ່ນມອງເຫັນຄຳສອນທຸ່ມເທັດຂອງ ລະບອບສັນຕະປາປາເທົ່າໃດ ເພິ່ນກໍນຳສະເໜີຫຼັກຄຳສອນໃນພຣະຄຳພີດ້ວຍໃຈຮ້ອນຮົນຫຼາຍຍິ່ງຂຶ້ນ ເທົ່ານັ້ນ. ເພິ່ນເຫັນວ່າຄຣິສຕະຈັກໂຣມໄດ້ປະຖິ້ມພຣະຄຳຂອງພຣະເຈົ້າ ເພື່ອຮັບເອົາທຳນຽມປະເພນີຂອງ ມະນຸດ ເພິ່ນຈຶ່ງກ່າວໂທດພວກບາດຫຼວງຢ່າງກ້າຫານທີ່ກີດກັນປະຊາຊົນບໍ່ໃຫ້ເຂົ້າເຖິງພຣະຄຳພີ ພ້ອມ ທັງຮຽກຮ້ອງຕ້ອງການໃຫ້ພວກເຂົາຄືນພຣະຄຳພີແກ່ປະຊາຊົນ ແລະ ໃຫ້ພຣະຄຳພີມີອຳນາດໃນ ຄຣິສຕະຈັກອີກ. ໄວຢ໌ບເປັນອາຈານທີ່ຫ້າວຫັນ ແລະ ມີຄວາມສາມາດ ທັງເປັນນັກເທດທີ່ມີສິລະປະ ໃນການເວົ້າ, ສ່ວນຊີວິດປະຈຳວັນຂອງເພິ່ນກໍສະທ້ອນໃຫ້ເຫັນເຖິງຄວາມຈິງທີ່ເພິ່ນເທດສະໜາ. ຄົນ ທົ່ວໄປອາງໃຈ ແລະ ນັບຖືເພິ່ນໃນຖານະທີ່ເພິ່ນມີຄວາມຮູ້ໃນພຣະຄຳພີຢ່າງດີ, ສອນດ້ວຍເຫດຜົນ, ມີ

ຊີວິດທີ່ບໍຣິສຸດ, ມີຄວາມກ້າຫານທີ່ບໍ່ທໍ້ຖອຍ ແລະ ມີຄວາມຊື່ສັດສຸດຈະຣິດທີ່ໝັ້ນຄົງແນ່ວແນ່. ຫຼາຍຄົນ ບໍ່ພໍໃຈກັບຄວາມເຊື່ອຖືເດີມຂອງຕົນ ເມື່ອພວກເຂົາເຫັນຄວາມໄຮ້ສິນລະທຳທີ່ປາກົດຂຶ້ນໃນຄຣິສຕະຈັກ ໂຣມ ພວກເຂົາຈຶ່ງຮັບເອົາຄວາມຈິງທີ່ໄວຄລິບສອນດ້ວຍຄວາມຊົມຊື່ນຍິນດີທີ່ບໍ່ສາມາດປິດບັງໄວ້ໄດ້; ແຕ່ ພວກຜູ້ນຳຝ່າຍສັນຕະປາປາ ໂກດຮ້າຍ ເມື່ອຮູ້ວ່າ ນັກປະຕິຮູບຄົນນີ້ ກຳລັງມີອິດທິພົນຫຼາຍກວ່າ ພວກເຂົາ. {GC 81.2}

ຄວາມຊົ່ວທີ່ຕ້ອງຕໍ່ຕ້ານ

ໄວຄລິບມີທັກສະອັນຫຼັກແຫຼມໃນການສັ່ງເກດຄວາມເທັດ; ເພິ່ນຕໍ່ຕ້ານນະໂຍບາຍຕ່າງ ໆ ຂອງຄຣິສ-ຕະຈັກໂຣມທີ່ໃຊ້ອຳນາດຢ່າງເກີນຄວນໂດຍປາສະຈາກຄວາມຢ້ານກົວ. ໃນລະຫວ່າງທີ່ຮັບໜ້າທີ່ເປັນ ບາດຫຼວງປະຈຳຣາຊສຳນັກ ເພິ່ນຢືນຢັນຕໍ່ສູ້ກັບນະໂຍບາຍຂອງສັນຕະປາປາທີ່ໃຫ້ກຽດສັດອັ່ງກິດເສຍຄ່າ ບັນນາການ ໂດຍສະແດງໃຫ້ເຫັນວ່າຈຸດຢືນຂອງສັນຕະປາປາ ທີ່ອ້າງວ່າມີອຳນາດເໜືອບັນດາກະສັດ ທັ່ງຫຼາຍໃນໂລກນັ້ນ ບໍ່ສົມເຫດສົມຜົນ ແລະ ຂັດຕໍ່ພຣະຄຳພີ. ຂໍ້ຮຽກຮ້ອງຂອງສັນຕະປາປາສ້າງຄວາມ ຂຸ່ນເຄືອງອັນໃຫຍ່ຫຼວງໃຫ້ແກ່ຄົນທັ່ງຫຼາຍ; ດັ່ງນັ້ນ, ຄຳສອນຂອງໄວຄລິບຈຶ່ງມີອິດທິພົນຕໍ່ຄວາມຄິດ ຂອງຄົນຊັ້ນປັນຍາຊົນໃນຊາດ. ກະສັດພ້ອມດ້ວຍພວກຂຸນນາງໄດ້ຮ່ວມມືກັນເພື່ອປະຕິເສດການແອບ ອ້າງອຳນາດການປົກຄອງຂອງສັນຕະປາປາ ແລະ ການຖວາຍຄ່າບັນນາການໃຫ້ເພິ່ນ. ດ້ວຍເຫດນີ້, ອຳນາດຂອງສັນຕະປາປາຈຶ່ງຖືກບັນທອນລົງຢ່າງໜັກໜ່ວງໃນປະເທດອັ່ງກິດ. {GC 82.1}

ຄວາມຊົ່ວອີກເລື່ອງໜຶ່ງທີ່ນັກປະຕິຮູບຜູ້ນີ້ດຳເນີນການຕໍ່ສູ້ຢ່າງເດັດດ່ຽວເປັນເວລາຍາວນານນັ້ນ ຄື ຄະນະຕ່າງ ໆ ຂອງພຣະການາໂຕລິກ. ພວກພຣະການາໂຕລິກເຫຼົ່ານີ້ເໝືອນຝູງຕັກກະແຕນທີ່ກະຈັດກະຈາຍ ຢູ່ທົ່ວປະເທດອັ່ງກິດ ແລະ ເປັນຮອຍດ່າງໃນຄວາມຈະເລີນຮຸ່ງເຮືອງຂອງປະເທດຊາດ. ບໍ່ວ່າຈະເປັນເລື່ອງ ຄວາມຂະຫຍັນໝັ່ນພຽນ, ການສຶກສາ ຫຼື ສິນລະທຳ ທັ່ງໝົດນີ້ລ້ວນແຕ່ໄດ້ຮັບອິດທິພົນຢ່າງຮຸນແຮງ ຈາກການເຄື່ອນໄຫວຂອງພວກເຂົາ. ການຢູ່ລ້າ ແລະ ການທ່ຽວຂໍທານຂອງພວກພຣະການາໂຕລິກ ບໍ່ ພຽງແຕ່ເປັນການສິ້ນເປືອງຊັບສິນຂອງປະຊາຊົນທີ່ໜັກໜ່ວງເທົ່ານັ້ນ ແຕ່ເປັນເຫດໃຫ້ຄົນດູຖູກວຽກງານ ທີ່ເປັນປະໂຫຍດອີກດ້ວຍ, ຄົນໜຸ່ມສາວຈຶ່ງຂາດສິນລະທຳຈົນເສຍຄົນ. ຫຼາຍຄົນຖືກພຣະການາໂຕລິກ ຊັກຈູງໃຫ້ເຂົ້າສຳນັກຄຸນພໍ່ຄຸນແມ່ ເພື່ອອຸທິດຊີວິດໃຫ້ກັບການບວດໃນຖານະບາດຫຼວງ ຫຼື ແມ່ຊີ ໂດຍ ບໍ່ໄດ້ຮັບການເຫັນດີຍິນຍອມຂອງຜູ້ປົກຄອງ; ຊ້ຳບໍ່ໜຳ, ກໍຍັງບໍ່ໄດ້ແຈ້ງໃຫ້ພໍ່ແມ່ຮັບຊາບ ແຕ່ກັບ ລັກບວດແມ່ນວ່າຖືກພໍ່ແມ່ຫ້າມປາມໄວ້ກໍຕາມ. ມີຜູ້ນຳລຸ້ນບຸກເບີກຂອງຄຣິສຕະຈັກໂຣມຄົນໜຶ່ງໄດ້ ອ້າງວ່າ ການບວດເປັນໜ້າທີ່ທີ່ສຳຄັນກວ່າຄວາມຮັກ ແລະ ຄວາມກະຕັນຍູທີ່ລູກຄວນມີຕໍ່ບິດາ ມານດາ ໂດຍກ່າວວ່າ: “ຖ້າຫາກພໍ່ຄິງ ໆ ຈະນອນຮ້ອງໄຫ້ ແລະ ຄ່ຳຄວນຕໍ່ໜ້າປະຕູ ແລະ ແມ່ ຂອງເຈົ້າຈະເຜີຍກາຍທີ່ໃຫ້ກຳເນີດເຈົ້າ ແລະ ເປີດເອິກທີ່ລ້ຽງເຈົ້າມາ ກໍໃຫ້ເຈົ້າຢຽບຢ້ຳພວກເຂົາລົງໃຕ້ ຕີນ ແລະ ກ້າວເດີນກົ່ງຕໍ່ໄປສູ່ພຣະຄຣິສ.” ຕໍ່ມາ, ມາຕິນ ລູເທີ ເອີ້ນຄຳສອນນີ້ວ່າ: “ຄວາມປ່າເຖື່ອນ ທີ່ຂາດມະນຸດສະທຳ ເພາະມີລັກສະນະເໝືອນໝາປ່າ ແລະ ຜະເດັດການຫຼາຍກວ່າທີ່ຈະມີລັກສະນະ ຂອງຄຣິສຕຽນ ແລະ ມະນຸດ.” ເພາະເຫດນີ້, ລູກຈຶ່ງມີໃຈແຂງກະດ້າງໃສ່ພໍ່ແມ່.[1] ດັ່ງນັ້ນ, ບັນດາ ຜູ້ນຳຝ່າຍສັນຕະປາປາ ຈຶ່ງຍົກເອົາທຳນຽມຂອງມະນຸດໄວ້ເໜືອກົດບັນຍັດຂອງພຣະເຈົ້າ ເໝືອນທີ່ພວກ ຟາຣີຊາຍໃນສະໄໝພຣະເຢຊູໄດ້ກະທຳ. ດ້ວຍເຫດນີ້, ຈຶ່ງເຮັດໃຫ້ມີຄອບຄົວແຕກແຍກ ແລະ ພໍ່ແມ່ຖືກ ຕັດຂາດຈາກລູກ ໆ. {GC 82.2}

[1] ບານັສ ເຊຍ (Barnas Sears), *ຊີວິດຂອງລູເທີ*, ໜ້າ 70, 69.

ແມ່ນແຕ່ນັກສຶກສາໃນມະຫາວິທະຍາໄລຕ່າງ ໆ ກໍຍັງຫຼົງກົນລວງຂອງພວກນັກບວດ ແລະ ຖືກ ຊັກຈູງໃຫ້ບວດນຳ. ພາຍຫຼັງ ມີຫຼາຍຄົນກິນແໜງທີ່ໄດ້ບວດ ເພາະເຫັນວ່າເປັນຮອຍບາບໃນຊີວິດ ແລະ ເປັນເຫດນຳຄວາມເສຍໃຈມາສູ່ພໍ່ແມ່ຂອງຕົນ, ແຕ່ເມື່ອພວກເຂົາຕິດກັບດັກໄປແລ້ວ ກໍເປັນໄປບໍ່ໄດ້ ທີ່ຈະຫຼຸດອອກໃຫ້ເປັນອິດສະຫຼະໄດ້ເລີຍ. ພໍ່ແມ່ຫຼາຍຄົນຢ້ານອິດທິພົນຂອງພວກນັກບວດ ຈຶ່ງບໍ່ຍອມສົ່ງ ລູກຊາຍໄປຮຽນຢູ່ມະຫາວິທະຍາໄລ. ຈຳນວນນັກສຶກສາໃນສະຖາບັນການສຶກສາທີ່ສຳຄັນຕ່າງ ໆ ຫຼຸດ ໜ້ອຍຖອຍລົງຫຼາຍຢ່າງເຫັນໄດ້ຊັດເຈນ ຈົນສະຖາບັນເຫຼົ່ານັ້ນງຽບເຫງົາ ແລະ ຄົນໃນສັງຄົມກໍຂາດ ຄວາມຮູ້. {GC 83.1}

ສັນຕະປາປາໄດ້ມອບອຳນາດໃຫ້ພວກນັກບວດເຫຼົ່ານີ້ຟັງຄຳສາລະພາບບາບ ແລະ ຍົກໂທດໃຫ້ ຜູ້ຄົນ. ການກະທຳເຊັ່ນນີ້ກາຍເປັນຕົ້ນຕໍຂອງຄວາມຊົ່ວຊ້າທີ່ຮ້າຍແຮງ. ພວກພຣະກາໂຕລິກມຸ່ງຫວັງ ເພື່ອກອບໂກຍເງິນຄຳເພີ່ມຂຶ້ນ ຈຶ່ງພ້ອມໃຫ້ອະໄພຄວາມຜິດບາບຂອງອາດຊະຍາກອນທຸກຮູບແບບ. ຜົນ ທີ່ຕາມມາກໍຄື ຄວາມຊົ່ວຊ້າອັນຮ້າຍແຮງທີ່ສຸດໄດ້ເພີ່ມທະວີຄູນຢ່າງໄວວາ. ສ່ວນຄົນປ່ວຍໂຊ ແລະ ຄົນຍາກຈົນກໍຖືກປະຖິ້ມໃຫ້ທົນທຸກທໍລະມານຕໍ່ໄປ; ໃນຂະນະດຽວກັນ, ຂອງທີ່ບໍລິຈາກມາເພື່ອ ບັນເທົາທຸກ ກໍເຂົ້າກະເປົ໋າຂອງພວກນັກບວດ ຜູ້ທີ່ຂົ່ມຂູ່ໃຫ້ປະຊາຊົນບໍລິຈາກເງິນເຂົ້າຄະນະຂອງ ຕົນ ແລະ ປະນາມຄົນທີ່ບໍ່ບໍລິຈາກວ່າ ເປັນຜູ້ທີ່ຂາດຄວາມເຊື່ອສັດທາໃນພຣະເຈົ້າ. ເຖິງແມ່ນວ່າ ພວກພຣະກາໂຕລິກອ້າງວ່າຕົນບໍ່ຫຍຸ້ງກ່ຽວກັບເງິນຄຳກໍ່ຕາມ ແຕ່ຄວາມຮັ່ງມີຂອງພວກເຂົາເພີ່ມຂຶ້ນ ຕະຫຼອດເວລາ, ຕຶກອາຄານທີ່ອະລັງການ ແລະ ໂຕ໊ະອາຫານທີ່ຫຼູຫຼາຂອງພວກເຂົາ ຍິ່ງເຮັດໃຫ້ ເຫັນຄວາມຍາກຈົນຂອງຊາດບ້ານເມືອງທີ່ນັບມື້ທະວີຍິ່ງຂຶ້ນ. ໃນຂະນະທີ່ພວກພຣະກາໂຕລິກໃຊ້ຊີວິດ ຢ່າງຟຸມເຟືອຍ ແລະ ອີ່ມໜຳສຳລານ ພວກເຂົາສົ່ງຄົນທີ່ຂາດຄວາມຮູ້ອອກໄປສອນປະຊາຊົນແທນ ພວກຕົນ. ຄົນທີ່ຖືກສົ່ງອອກໄປສາມາດເວົ້ານິທານຫຼອກເດັກ, ຕຳນານ ແລະ ເລື່ອງຕະຫຼົກຕ່າງ ໆ ເພື່ອໃຫ້ປະຊາຊົນເພີດເພີນ ຈົນເຮັດໃຫ້ພວກເຂົາຍິ່ງຫຼົງໄຫຼຕາມກົນອຸບາຍຂອງພວກນັກບວດຢ່າງ ສິ້ນເຊີງ. ພວກພຣະກາໂຕລິກສືບຕໍ່ຄອບງຳຝູງຊົນທີ່ງົມງວາຍ ແລະ ຊັກຈູງພວກເຂົາໃຫ້ເຊື່ອວ່າ ໜ້າທີ່ ທາງສາສະໜາທັງໝົດແມ່ນໃຫ້ຍອມຮັບວ່າສັນຕະປາປາມີອຳນາດສູງສຸດ, ໃຫ້ບູຊາພວກນັກບຸນທີ່ ລ່ວງລັບໄປແລ້ວ ແລະ ຖວາຍບໍລິຈາກໃຫ້ແກ່ພວກນັກບວດ, ໂດຍຖືວ່າການກະທຳເຊັ່ນນີ້ ກໍພຽງພໍ ທີ່ຈະຮັບຮອງວ່າ ພວກເຂົາຈະໄດ້ຂຶ້ນສະຫວັນ. {GC 83.2}

ມີປັນຍາຊົນທີ່ມີສິນທຳຫຼາຍຄົນພະຍາຍາມປະຕິຮູບຄະນະຕ່າງ ໆ ຂອງພວກນັກບວດໂດຍບໍ່ເກີດ ຜົນ, ແຕ່ໄວຢ໌ບເລັ່ງໂຈມຕີທີ່ຮາກເຫງົ້າຕົ້ນຕໍຂອງຄວາມຊົ່ວ ດ້ວຍຄວາມເຂົ້າໃຈບັນຫາທີ່ເລິກເຊິ່ງ ກວ່າ. ເພິ່ນປະກາດວ່າ ແມ່ນລະບົບຄະນະນັກບວດເອງທີ່ຜິດ ແລະ ສົມຄວນຖືກຍົກເລີກ ເຊິ່ງ ເປັນການເປີດປະເດັນໃຫ້ເກີດການໂອ້ລົມສົນທະນາເຖິງເລື່ອງນີ້. ເມື່ອພວກນັກບວດເດີນທາງໄປທົ່ວ ປະເທດແຕ່ເໜືອຮອດໃຕ້ ເພື່ອຈຳໜ່າຍໃບລ້າງບາບ ຫຼາຍຄົນເກີດມີຄວາມສົງໄສເຖິງຄວາມເປັນໄປ ໄດ້ ທີ່ຈະຊື້ການໃຫ້ອະໄພບາບດ້ວຍເງິນໄດ້ແທ້ບໍ. ພວກເຂົາສົງໄສວ່າ ຄວນຈະໄປຂໍການໃຫ້ອະໄພຈາກ ພຣະເຈົ້າ ຫຼືວ່າ ຄວນຈະໄປຫາສັນຕະປາປາຕາມເຄີຍ. ມີຄົນຈຳນວນບໍ່ໜ້ອຍຮູ້ສຶກຕົກໃຈຕໍ່ຄວາມໂລບ ຂອງພວກພຣະກາໂຕລິກທີ່ມີທ່າທີບໍ່ຮູ້ຈັກອີ່ມຈັກພໍ. ພວກເຂົາກ່າວວ່າ: “ບັນດານັກບວດ ແລະ ພວກ ບາດຫຼວງຂອງຄຣິສຕະຈັກໂຣມກຳລັງກັດກິນພວກເຮົາເໝືອນດັ່ງມະເຮັ່ງຮ້າຍ. ຖ້າພຣະເຈົ້າບໍ່ກອບກູ້ ພວກເຮົາ ປະຊາຊົນຈະພິນາດຢ່າງແນ່ນອນ.”[2] ເພື່ອປິດບັງຄວາມໂລບມາກໂລພາຂອງຕົນ ພວກພຣະ ກາໂຕລິກເຫຼົ່ານີ້ອ້າງວ່າ ພວກເຂົາພຽງແຕ່ເຮັດຕາມແບບຢ່າງຂອງພຣະຜູ້ຊ່ວຍໃຫ້ລອດ ໂດຍການຢືນຢັນ

[2] ໂດບິນເຍ (D’Aubigné), ເຫຼັ້ມ 17, ບົດ 7.

ວ່າ ພຣະເຢຊູ ແລະ ພວກສາວົກຂອງພຣະອົງໄດ້ຮັບການອຸປະຖຳຄ້ຳຊູຈາກການໃຫ້ບຸນສຸນທານຂອງ ປະຊາຊົນ. ແຕ່ການອ້າງເຊັ່ນນີ້ເຮັດໃຫ້ເກີດຄວາມເສຍຫາຍແກ່ພວກເຂົາເອງ ເພາະເປັນເຫດໃຫ້ຫຼາຍ ຄົນຫັນມາອ່ານພຣະຄຳພີ ເພື່ອສຶກສາຫາຄວາມຈິງດ້ວຍຕົນເອງ ເຊິ່ງເປັນເລື່ອງທີ່ຄຣິສຕະຈັກໂຣມບໍ່ ປາຖະໜາທີ່ສຸດ. ມີຫຼາຍຄົນຫັນໄປໃສ່ໃຈໃນພຣະຄຳພີອັນເປັນແຫຼ່ງຄວາມຈິງ ເຊິ່ງຄຣິສຕະຈັກໂຣມມີ ເປົ້າໝາຍທີ່ຈະປິດບັງຄວາມຈິງເຫຼົ່ານັ້ນ. *{GC 84.1}*

ໄວຄຼິບເລີ່ມຂຽນ

ໄວຄຼິບເລີ່ມຂຽນ ແລະ ເຜີຍແຜ່ບົດຄວາມຕໍ່ຕ້ານພວກພຣະກາໂຕລິກ ບໍ່ແມ່ນເພື່ອຜິດຖຽງກັບ ພວກເຂົາ ແຕ່ເພື່ອໃຫ້ປະຊາຊົນເອົາໃຈໃສ່ຕໍ່ຫຼັກຄຳສອນຂອງພຣະຄຳພີ ແລະ ໃສ່ໃຈຕໍ່ພຣະເຈົ້າຜູ້ ຊົງດົນບັນດານໃຫ້ມີການຂຽນພຣະຄຳພີຂຶ້ນ. ເພິ່ນປະກາດວ່າ ສັນຕະປາປາບໍ່ມີອຳນາດໃນການ ໃຫ້ອະໄພບາບ ຫຼື ການຕັດຊື່ຄົນອອກຈາກຄຣິສຕະຈັກຫຼາຍກວ່າບາດຫຼວງທົ່ວໄປ. ນອກຈາກ ນີ້, ເພິ່ນກໍສອນວ່າບໍ່ສາມາດຕັດຊື່ຜູ້ໃດອອກຈາກຄຣິສຕະຈັກໄດ້ຢ່າງແທ້ຈິງ ນອກເສຍຈາກບຸກຄົນ ດັ່ງກ່າວໄດ້ນຳການພິພາກສາຂອງພຣະເຈົ້າມາສູ່ຕົນເອງ. ຄົງບໍ່ມີວິທີອື່ນທີ່ດີກວ່ານີ້ ທີ່ຈະລົ້ມໂຄງສ້າງ ລະບອບອຳນາດທີ່ຄອບງຳທັງຈິດວິນຍານ ແລະ ຊີວິດ ເຊິ່ງສັນຕະປາປາໄດ້ຕັ້ງຂຶ້ນໄວ້ເພື່ອຄຸມຂັງ ຈິດວິນຍານ ແລະ ຮ່າງກາຍຂອງຄົນນັບລ້ານ. *{GC 84.2}*

ແລ້ວກໍເປັນອີກຄັ້ງໜຶ່ງທີ່ໄວຄຼິບຖືກເອີ້ນໃຫ້ປົກປ້ອງກະສັດອັງກິດຈາກການຖືກລະເມີດສິດທິໂດຍ ຄຣິສຕະຈັກໂຣມ. ເພິ່ນໄດ້ຮັບການແຕ່ງຕັ້ງໃຫ້ເປັນທູດຫຼວງ ແລະ ໄດ້ໄປປະຈຳການຢູ່ປະເທດເນເທີແລນ ເປັນເວລາສອງປີ ເພື່ອປະຊຸມຫາລືກັບຄະນະຂ້າຫຼວງຂອງສັນຕະປາປາ. ໃນຂະນະທີ່ດຳລົງຕຳແໜ່ງໃນ ປະເທດນີ້ ເພິ່ນຕ້ອງສື່ສານກັບບັນດາຜູ້ນຳຄຣິສຕະຈັກຈາກປະເທດຝຣັ່ງ, ອິຕາລີ ແລະ ແອັດສະປາຍ (Spain), ແລະ ກໍມີໂອກາດສັງເກດເຫັນເຫດການຕ່າງໆທີ່ຢູ່ເບື້ອງຫຼັງ ທັງໄດ້ຮັບຮູ້ຫຼາຍສິ່ງຫຼາຍ ຢ່າງເຊິ່ງບໍ່ສາມາດຮູ້ໄດ້ຕອນຢູ່ໃນປະເທດອັງກິດ. ເພິ່ນໄດ້ຮຽນຮູ້ຫຼາຍສິ່ງຫຼາຍຢ່າງ ທີ່ຈະຊ່ວຍເພິ່ນ ສຸມໃສ່ວຽກງານໃນອະນາຄົດ. ຈາກຕົວແທນເຫຼົ່ານີ້ ເພິ່ນຈຶ່ງເຫັນທາດແທ້ ແລະ ຈຸດມຸ່ງໝາຍຂອງ ລະບອບສັນຕະປາປາ. ເມື່ອກັບໄປຍັງປະເທດອັງກິດ ທ່ານໄວຄຼິບເຜີຍແຜ່ຄຳສອນເດີມຂອງເພິ່ນຢ່າງ ເປີດເຜີຍ ແລະ ກະຕືລືລົ້ນກວ່າເກົ່າ ໂດຍປະກາດວ່າ ຄວາມໂລບ, ຄວາມຫຍິ່ງ ແລະ ຄວາມ ຫຼອກລວງແມ່ນພຣະແຫ່ງຄຣິສຕະຈັກໂຣມ. *{GC 84.3}*

ໄວຄຼິບໄດ້ຂຽນໄວ້ໃນໃບປົວສະບັບໜຶ່ງທີ່ກ່າວເຖິງສັນຕະປາປາກັບພວກລະດົມເກັບເງິນຂອງເພິ່ນ ວ່າ: “ພວກເຂົາດູດເອົາເງິນລ້ຽງຊີບຂອງຄົນຍາກຈົນອອກຈາກແຜ່ນດິນຂອງເຮົາ ແລະ ເກັບເອົາ ເງິນສະກຸນມາກ[3] ຈາກພຣະຣາຊາຫຼາຍພັນຫຼຽນຕໍ່ປີ ເພື່ອພິທີທາງສາສະໜາ, ແຕ່ເປັນເງິນທີ່ຖືກ ສາບແຊ່ງ ເພາະວ່າພວກເຂົາຄິດວ່າຈະສາມາດໃຊ້ເງິນນີ້ເພື່ອຊື້ພຣະພອນຂອງພຣະເຈົ້າໄດ້. ນອກຈາກ ນັ້ນ, ກໍຍັງບັງຄັບໃຫ້ຄົນໃນປະເທດຕ່າງໆທີ່ນັບຖືສາສະໜາຄຣິສເຫັນດີ ແລະ ສະໜັບສະໜູນ ຫຼັກຄຳສອນທີ່ບໍ່ຖືກຕ້ອງນີ້. ແນ່ນອນ ຖ້າປະເທດຂອງເຮົາມີພູເຂົາທອງຄຳທີ່ສູງໃຫຍ່ ແລະ ບໍ່ເຄີຍ ມີໃຜເອົາຄຳຂອງມັນໄປເວັ້ນເສຍແຕ່ພວກຝ່າຍສັນຕະປາປາຜູ້ທໍລະນົງທາງໂລກີກຸ່ມນີ້ເທົ່ານັ້ນ ໃນທີ່ສຸດ ພູເຂົາໜ່ວຍນີ້ຈະຖືກຂຸດໄປຈົນໝົດ ເພາະວ່າສັນຕະປາປາໄດ້ແຕ່ເອົາເງິນອອກໄປຈາກແຜ່ນດິນຂອງ ພວກເຮົາ ແລະ ບໍ່ເຄີຍຄືນຈັກເທື່ອ; ແຕ່ພຣະເຈົ້າຈະສາບແຊ່ງເພິ່ນ ຍ້ອນການຊື້ຂາຍຄວາມລອດ ນີ້ແຫຼະ.”[4] *{GC 85.1}*

[3] ຫຼຽນມາກເປັນສະກຸນເງິນຊະນິດໜຶ່ງ.

[4] ຈອນ ລິວອິສ (John Lewis), *ຊີວະປະຫວັດ ແລະ ການທົບທຸກຂອງ ຈ. ໄວຄຼິບ*, ໜ້າ 37.

ບໍ່ດົນຫຼັງຈາກທີ່ກັບໄປປະເທດອັງກິດ ໄວຄລິບໄດ້ຮັບການແຕ່ງຕັ້ງຈາກພຣະຣາຊາ ໃຫ້ເປັນອາຈານປະຈຳໂບດຢູ່ເມືອງລັດເຕີເວີດ (Lutterworth). ເລື່ອງນີ້ເປັນການຢືນຢັນວ່າ ຢ່າງໜ້ອຍພຣະຣາຊາບໍ່ໄດ້ເຄືອງໃຈຍ້ອນການເວົ້າກ່ຽວໄປກ່ຽວມາຂອງໄວຄລິບ. ອິດທິພົນຂອງເພິ່ນມີສ່ວນໃນການໂນ້ມນ້າວການກະທຳຂອງຣາຊສຳນັກ ແລະ ຊ່ວຍຫຼໍ່ຫຼອມຄວາມເຊື່ອຂອງຄົນທັງຊາດ. *{GC 85.2}*

ພຣະເຈົ້າຊົງປົກປ້ອງບຸກຄົນທີ່ຕ້ອງຫ້າມ

ໃນບໍ່ຊ້າ ສັນຕະປາປາປະນາມຕໍ່ຕ້ານໄວຄລິບຢ່າງຮຸນແຮງ. ເພິ່ນອອກຄຳສັ່ງສາມສະບັບ ສົ່ງໄປຍັງປະເທດອັງກິດ. ສະບັບໜຶ່ງສົ່ງໃຫ້ມະຫາວິທະຍາໄລ, ສະບັບໜຶ່ງສົ່ງໃຫ້ພຣະຣາຊາ ແລະ ອີກສະບັບໜຶ່ງສົ່ງໃຫ້ພວກຜູ້ນຳຄຣິສຕະຈັກ, ທັງສາມສະບັບສັ່ງໃຫ້ຢຸດການເຄື່ອນໄຫວຂອງໄວຄລິບທັນທີໂດຍເດັດຂາດ ຍ້ອນເຜີຍແຜ່ຄຳສອນນອກຮີດ.[5] ເຖິງຢ່າງໃດກໍດີ ກ່ອນທີ່ຄຳສັ່ງດັ່ງກ່າວຈະມາຮອດ ພວກເຈົ້າຄະນະຄຣິສຕະຈັກໂຣມມີຄວາມຮ້ອນຮົນ ແລະ ໄດ້ເອີ້ນໄວຄລິບເຂົ້າມາເພື່ອໃຫ້ຖືກພິຈາລະນາຕັດສິນຕໍ່ໜ້າພວກເຂົາ ແຕ່ໃນບັນດາຂຸນນາງຂອງປະເທດອັງກິດທີ່ມີອຳນາດສູງສຸດ ມີສອງຄົນໄດ້ໄປສານນຳເພິ່ນເພື່ອຟັງການພິພາກສາ. ສ່ວນປະຊາຊົນກໍລ້ອມຕຶກອາຄານ ແລະ ບຸກເຂົ້າໄປຂົ່ມຂູ່ພວກຜູ້ພິພາກສາທີ່ກຳລັງດຳເນີນຄະດີຢູ່ໃຫ້ຢ້ານກົວຈົນເລີກສານ. ໄວຄລິບຈຶ່ງໄດ້ຮັບອະນຸຍາດໃຫ້ເມືອບ້ານຢ່າງປອດໄພ. ຕໍ່ມາບໍ່ດົນ ກະສັດເອັດເວີດທີ 3 (Edward III) ໄດ້ເສຍຊີວິດ; ໃນຍາມທີ່ເພິ່ນແກ່ຊະລາ ພວກຜູ້ນຳຄຣິສຕະຈັກພະຍາຍາມໂນ້ມນ້າວໃຫ້ເພິ່ນຕໍ່ຕ້ານໄວຄລິບ ແຕ່ຫຼັງຈາກທີ່ເພິ່ນເສຍຊີວິດແລ້ວ ຜູ້ທີ່ມາຮັກສາຣາຊການແຜ່ນດິນແທນນັ້ນ ກັບກາຍເປັນຄົນທີ່ເຄີຍປົກປ້ອງທ່ານໄວຄລິບນັ້ນເອງ. *{GC 85.3}*

ຢ່າງໃດກໍຕາມ, ສັນຕະປາປາກໍອອກຄຳສັ່ງທີ່ເດັດຂາດ ໃຫ້ທົ່ວປະເທດອັງກິດຈັບກຸມ ແລະ ກັກຂັງໄວຄລິບໄວ້. ມາດຕະການເຫຼົ່ານີ້ຊີ້ໄປເຖິງການປະຫານຊີວິດໄວຄລິບໂດຍກົງ. ເບິ່ງຄືວ່າ ເພິ່ນຈະຕ້ອງຕົກເປັນເຫຍື່ອຄວາມແຄ້ນເຄືອງຂອງຄຣິສຕະຈັກໂຣມໃນບໍ່ຊ້າ. ແຕ່ພຣະເຈົ້າຜູ້ກ່າວແກ່ອັບຣາຮາມວ່າ, “ເຈົ້າຢ່າຢ້ານແຕ່ຢ່າງໃດເລີຍ, . . . ເຮົາແມ່ນໂລ້ຕ້ານທານທີ່ຄອຍຮັກສາເຈົ້າ” (ປະຖົມມະການ 15:1) ຊົງຢຸດພຣະຫັດຂອງພຣະອົງອອກ ເພື່ອປົກປ້ອງຜູ້ຮັບໃຊ້ຂອງພຣະອົງອີກຄັ້ງໜຶ່ງ. ການຕາຍກໍເກີດຂຶ້ນ, ແຕ່ຜູ້ທີ່ເສຍຊີວິດບໍ່ແມ່ນນັກປະຕິຮູບ ຫາກແຕ່ເປັນສັນຕະປາປາຜູ້ປະກາດການທຳລາຍເພິ່ນຕ່າງຫາກ. ເມື່ອສັນຕະປາປາເກຼັກກໍຣີທີ 11 (Gregory XI) ເສຍຊີວິດລົງ ບັນດາຜູ້ນຳຄຣິສຕະຈັກທີ່ຮ່ວມກັນເພື່ອທຳການສືບສວນທ່ານໄວຄລິບກໍເລີກລາກັນໄປ. *{GC 86.1}*

ແລ້ວພຣະເຈົ້າຊົງຄວບຄຸມຢູ່ເໜືອສະຖານະການຕ່າງ ໆ ຢ່າງຕໍ່ເນື່ອງ ເພື່ອເປີດໂອກາດໃຫ້ການປະຕິ-ຮູບເຕີບໂຕຂຶ້ນ. ຫຼັງຈາກການເສຍຊີວິດຂອງສັນຕະປາປາເກຼັກກໍຣີ ກໍມີການເລືອກສັນຕະປາປາສອງອົງທີ່ເປັນຄູ່ແຂ່ງກັນ, ທັງສອງຝ່າຍຕ່າງກໍຢືນຢັນວ່າຕົນເປັນບຸກຄົນທີ່ບໍ່ສາມາດເຮັດຜິດໄດ້ ແລະ ຮຽກຮ້ອງໃຫ້ຄົນທັງຫຼາຍຕິດຕາມເຊື່ອຟັງ. ຕ່າງຝ່າຍຕ່າງຮຽກຮ້ອງໃຫ້ບັນດາຜູ້ສັດຊື່ຊ່ວຍເຫຼືອຕົນໃນການເຮັດສົງຄາມຕໍ່ສູ້ກັບອີກຝ່າຍໜຶ່ງ, ໂດຍບັງຄັບໃຫ້ປະຕິບັດຕາມເຈດຈຳນົງຂອງຕົນດ້ວຍຄຳສາບແຊ່ງທີ່ຮ້າຍແຮງຕໍ່ບຸກຄົນທີ່ເປັນປໍລະປັກຕໍ່ສູ້ຕົນ ແລະ ໃຫ້ຄຳໝັ້ນສັນຍາແກ່ຜູ້ທີ່ສະໜັບສະໜູນຕົນວ່າຈະໄດ້ຮັບບຳເໜັດລາງວັນໃນສະຫວັນ. ເຫດການນີ້ເຮັດໃຫ້ອຳນາດຂອງລະບອບສັນຕະປາປາອ່ອນແອລົງຢ່າງຮຸນແຮງ. ທັງສອງຝ່າຍຕ່າງກໍທຸ້ມເທທຸກຢ່າງເທົ່າທີ່ຕົນເຮັດໄດ້ເພື່ອໂຈມຕີເຊິ່ງກັນແລະກັນ; ດ້ວຍເຫດນີ້, ໄວຄລິບຈຶ່ງມີເວລາພັກສະຫງົບຊ່ວງໄລຍະໜຶ່ງ. ສັນຕະປາປາທັງສອງອົງຕອບໂຕ້ກັນດ້ວຍ

[5] *ປະຫວັດທົ່ວໄປຂອງຄຣິສຕະສາສະໜາ ແລະ ຂອງຄຣິສຕະຈັກ*, ຍຸກ 6, ພາກ 2, ໝວດ 1, ວັກ 8 ຂອງອໍກັສຕັສ ນຽນເດີ (Augustus Neander).

ຄຳສາບແຊ່ງໃຫ້ອີກຝ່າຍໜຶ່ງຕົກນະຮົກ ທັງໄດ້ກ່າວຫາກັນຢ່າງສາສົມ, ເກີດມີການຂ້າຟັນລັນແທງກັນ ຈົນນອງເລືອດ. ອາດຊະຍາກຳ ແລະ ເລື່ອງອັບອາຍຂາຍໜ້າໄດ້ທັບຖົມເຂົ້າມາໃນຄຣິສຕະຈັກ. ແຕ່ ໃນຂະນະນັ້ນ ນັກປະຕິຮູບໄວຄລິບຢູ່ຢ່າງສະຫງົບສຸກໃນໂບດແຫ່ງເມືອງລັດເຕີເວີດ ຕັ້ງໜ້າເຮັດວຽກ ຢ່າງໝັ່ນພຽນ ເພື່ອເຍືອງສ່ອງໃຫ້ຜູ້ຄົນຫັນຈາກສັນຕະປາປາສອງອົງທີ່ກຳລັງດິ້ນຮົນຕໍ່ສູ້ກັນ ໄປຍັງ ອົງສັນຕິຣາດ ກຳຄີພຣະເຢຊູຄຣິສ. *{GC 86.2}*

ຄວາມແຕກແຍກ ແລະ ການຕໍ່ສູ້ກັນ ພ້ອມດ້ວຍຄວາມເສື່ອມເສຍທັງໝົດທີ່ເກີດຂຶ້ນນີ້ ໄດ້ປູທາງ ທີ່ນຳໄປສູ່ການປະຕິຮູບສາສະໜາຄັ້ງໃຫຍ່ ເພາະມັນໄດ້ເປີດເຜີຍໃຫ້ຄົນທັງຫຼາຍເຫັນເຖິງທາດແທ້ຂອງ ລະບອບສັນຕະປາປາ. ໄວຄລິບຂຽນບົດຄວາມເລື່ອງ "*ຄວາມຂັດແຍ້ງລະຫວ່າງສັນຕະປາປາດ້ວຍກັນ ເອງ*" ເພື່ອຮຽກຮ້ອງໃຫ້ປະຊາຊົນພິຈາລະນາວ່າ ສັນຕະປາປາທັງສອງອົງນີ້ຄົງໄດ້ເວົ້າຄວາມຈິງ ໃນ ການປະນາມກັນແລະກັນວ່າ ອີກຝ່າຍໜຶ່ງເປັນປໍລະປັກຕໍ່ສູ້ພຣະຄຣິສ. ເພີ່ນກ່າວວ່າ: "ພຣະເຈົ້າບໍ່ ຍອມໃຫ້ມານຮ້າຍຄອບງຳມະນຸດສະໂລກໂດຍຜ່ານສັນຕະປາປາພຽງອົງດຽວເທົ່ານັ້ນ, . . . ພຣະອົງຈຶ່ງຊົງ ໃຫ້ພວກເຂົາແຕກແຍກອອກເປັນສອງອົງ ເພື່ອວ່າ ຄົນທັງຫຼາຍຈະສາມາດເອົາຊະນະເຂົາທັງສອງໃນ ພຣະນາມຂອງພຣະຄຣິສໄດ້ງ່າຍຂຶ້ນ."[6] *{GC 86.3}*

ປະກາດຂ່າວປະເສີດ

ໄວຄລິບເທດສະໜາປະກາດຂ່າວປະເສີດໃຫ້ແກ່ຄົນຍາກຈົນ ຄືກັນກັບພຣະເຢຊູຄຣິສຜູ້ເປັນພຣະ-ອາຈານຂອງຕົນ. ເພີ່ນບໍ່ພໍໃຈທີ່ຈະເຜີຍແຜ່ແສງສະຫວ່າງແຫ່ງຄວາມຫວັງ ໃນເຮືອນຂອງຄົນຍາກຈົນ ຂອງເມືອງລັດເຕີເວີດ ອັນເປັນເຂດແດນຂອງຕົນເທົ່ານັ້ນ, ແຕ່ມີຄວາມຕັ້ງໃຈເຜີຍແຜ່ຂ່າວປະເສີດໄປ ທົ່ວທຸກພາກຂອງປະເທດອັງກິດ. ເພື່ອບັນລຸພາລະກິດນີ້ ເພີ່ນຈຶ່ງຈັດຕັ້ງຄະນະນັກເທດ ອັນປະກອບ ດ້ວຍບຸກຄົນທຳມະດາສາມັນທີ່ມີໃຈສັດທາ, ຮັກຄວາມຈິງ ແລະ ບໍ່ປາຖະໜາສິ່ງໃດຫຼາຍໄປກວ່າການ ເຜີຍແຜ່ຄວາມຈິງນັ້ນ. ຄົນເຫຼົ່ານີ້ໄປທຸກຫົນແຫ່ງ, ເທດສະໜາສັ່ງສອນຕາມທ້ອງຕະຫຼາດ, ຕາມຖະໜົນ ຫົນທາງໃນເມືອງໃຫຍ່ ແລະ ຕາມຮ່ອມນ້ອຍໃນບ້ານນອກຄອກນາ. ພວກເຂົາເສາะສະແຫວງຫາຄົນ ແກ່ຊະລາ, ຄົນເຈັບໄຂ້ໄດ້ປ່ວຍ, ພ້ອມດ້ວຍຄົນຕົກທຸກໄດ້ຍາກ ແລະ ໄດ້ແບ່ງປັນຂ່າວອັນໜ້າຍິນດີ ແຫ່ງພຣະຄຸນຂອງພຣະເຈົ້າໃຫ້ແກ່ພວກເຂົາ. *{GC 87.1}*

ໃນຖານະທີ່ໄວຄລິບເປັນອາຈານສອນວິຊາສາສະໜາສາດຢູ່ມະຫາວິທະຍາໄລອັອກຟອດ (Oxford), ເພີ່ນໄດ້ເທດສະໜາສັ່ງສອນພຣະຄຳຂອງພຣະເຈົ້າໃນຫໍປະຊຸມຕ່າງ ໆ ຂອງມະຫາວິທະຍາໄລ. ເພີ່ນ ແບ່ງປັນຄວາມຈິງຢ່າງສັດຊື່ໃຫ້ກັບນັກສຶກສາຜູ້ທີ່ຢູ່ໃຕ້ການຊີ້ແນະຂອງເພີ່ນ ຈົນເພີ່ນໄດ້ຮັບຂະໜານ ນາມວ່າເປັນ "ນັກປາດແຫ່ງຂ່າວປະເສີດ." ແຕ່ພາລະກິດທີ່ສຳຄັນທີ່ສຸດໃນຊີວິດຂອງເພີ່ນ ຄືການແປ ພຣະຄຳພີເປັນພາສາອັງກິດ. ໃນບົດຄວາມທີ່ມີຫົວຂໍ້ວ່າ: "*ຄວາມໝາຍອັນແທ້ຈິງຂອງພຣະຄຳພີ*" ເພີ່ນ ໄດ້ສະແດງອອກເຖິງຄວາມມຸ່ງໝັ້ນທີ່ຈະແປພຣະຄຳພີ ເພື່ອທຸກຄົນໃນປະເທດອັງກິດຈະສາມາດອ່ານ ກ່ຽວກັບພຣະທາຊກິດທັງຫຼາຍອັນມະຫັດສະຈັນຂອງພຣະເຈົ້າໃນພາສາບ້ານເກີດຂອງຕົນ. *{GC 87.2}*

ໃກ້ຕາຍແຕ່ບໍ່ຕາຍ

ແຕ່ແລ້ວ ໄວຄລິບ ກໍ ຕ້ອງ ຢຸດ ວຽກງານ ຕ່າງ ໆ ຢ່າງ ກະທັນຫັນ ຍ້ອນ ເພີ່ນ ລົ້ມໝອນນອນເສື່ອ ດ້ວຍ ພະຍາດໂຣຄາອັນຮ້າຍແຮງ. ເຖິງແມ່ນວ່າເພີ່ນມີອາຍຸຍັງບໍ່ທັນຮອດ 60 ປີກໍຕາມ ແຕ່ເນື່ອງຈາກ ການເຮັດວຽກໜັກ, ການສຶກສາຄົ້ນຄວ້າ ແລະ ການຖືກໂຈມຕີຂອງບັນດາສັດຕູຢ່າງບໍ່ຢຸດບໍ່ຢ່ອນ ໄດ້

[6] ອາ. ວອນ (R. Vaughan), *ຊີວິດ ແລະ ຄວາມຄິດເຫັນຂອງໄວຄລິບ*, ເຫຼັ້ມ 2, ໜ້າ 6.

ບັນທອນພາລະກຳລັງຂອງເພິ່ນ ແລະ ເຮັດໃຫ້ເພິ່ນແກ່ຊະລາລົງກ່ອນໄວອັນຄວນ. ຂ່າວເລື່ອງນີ້ເຮັດໃຫ້ພວກພຣະກາໂຕລິກສຸກສຳລານບານອົກ. ຕອນນີ້ ພວກເຂົາຄິດວ່າເພິ່ນຄົງຈະສຳນຶກຜິດຢ່າງຂົມຂື່ນກັບຄວາມຊົ່ວຮ້າຍທີ່ເພິ່ນໄດ້ເຮັດຕໍ່ຄຣິສຕະຈັກໂຣມ. ພວກເຂົາຟ້າວໄປທີ່ຫ້ອງພັກ ເພື່ອຟັງການສາລະພາບບາບຂອງເພິ່ນ. ມີຕົວແທນຈາກຄະນະນັກບວດທັງສີ່ຄະນະ ພ້ອມກັບເຈົ້າໜ້າທີ່ຝ່າຍພົນລະເຮືອນສີ່ທ່ານທີ່ຮວມຕົວກັນຢູ່ອ້ອມຕົວໄວຄຼິບຜູ້ເບິ່ງຄືໃກ້ຈະຕາຍ ແລະ ກ່າວວ່າ: “ເຈົ້າໃກ້ຈະຂາດໃຈຢູ່ແລ້ວ ຈົ່ງສຳນຶກໃນຄວາມຜິດຂອງເຈົ້າສາ ແລະ ຖອນຖ້ອຍຄຳທຸກຢ່າງທີ່ເຈົ້າເຄີຍເວົ້າໃຫ້ພວກເຮົາໄດ້ຮັບຄວາມເສື່ອມເສຍ.” ໄວຄຼິບນອນຟັງໂດຍບໍ່ໄດ້ເວົ້າຫຍັງ ແລ້ວຈຶ່ງບອກຜູ້ດູແລໃຫ້ປະຄອງເພິ່ນຂຶ້ນນັ່ງເທິງຕຽງ. ເພິ່ນຈ້ອງເບິ່ງພວກພຣະກາໂຕລິກໂດຍບໍ່ພັບຕາ ໃນຂະນະທີ່ພວກເຂົາລໍຖ້າໃຫ້ເພິ່ນຖອນຄຳເວົ້າ ແລ້ວຈຶ່ງກ່າວດ້ວຍນ້ຳສຽງທີ່ໜັກແໜ້ນໝັ້ນຄົງເໝືອນດັ່ງທີ່ຜ່ານມາ ອັນເປັນເຫດໃຫ້ພວກເຂົາເຄີຍສັ່ນສະເທືອນວ່າ: “ຂ້າພະເຈົ້າຈະບໍ່ຕາຍ ແຕ່ຈະມີຊີວິດ ແລະ ຈະປະກາດການກະທຳອັນຊົ່ວຮ້າຍຕ່າງ ໆ ຂອງພວກພຣະກາໂຕລິກໃຫ້ຄົນທັງຫຼາຍຟັງ.”[7] ພວກນັກບວດຕົກໃຈມຶນງົງ ແລະ ຮູ້ສຶກອັບອາຍຂາໜ້າ ຈຶ່ງຟ້າວພາກັນອອກໄປຈາກຫ້ອງຢ່າງໄວວາ. *{GC 87.3}*

ພຣະຄຳພີພາສາອັງກິດສະບັບທຳອິດ

ຖ້ອຍຄຳຂອງໄວຄຼິບກາຍເປັນຈີງ. ເພິ່ນມີຊີວິດຢູ່ຕໍ່ຈົນສາມາດມອບພຣະຄຳພີໄວ້ໃນມືຂອງເພື່ອນຮ່ວມຊາດ ເຊິ່ງເປັນອາວຸດທີ່ຂົ່ມພະລັງທີ່ສຸດໃນການຕໍ່ຕ້ານຄຣິສຕະຈັກໂຣມ. ພຣະຄຳພີເປັນຕົວແທນທີ່ສະຫວັນແຕ່ງຕັ້ງໄວ້ ເພື່ອປົດປ່ອຍຄົນໃຫ້ເປັນອິດສະຫຼະ, ສອນຄົນໃຫ້ຮູ້ຄວາມຈີງ ແລະ ປະກາດໃຫ້ຄົນກັບໃຈ. ໄວຄຼິບຕ້ອງຟັນຝ່າອຸປະສັກໃຫຍ່ຫຼາຍປະການກວ່າພາລະກິດນີ້ຈະສຳເລັດ ເຊັ່ນ: ຄວາມເຈັບໄຂ້ໄດ້ປ່ວຍດ້ວຍໂຣກຕ່າງ ໆ, ເວລາເຮັດວຽກທີ່ເຫຼືອຢູ່ອີກພຽງບໍ່ເທົ່າໃດປີ ແລະ ເຫຼົ່າສັດຕູທີ່ຈະຕ້ອງປະເຊີນ, ແຕ່ເພິ່ນໄດ້ຮັບກຳລັງໃຈດ້ວຍພຣະສັນຍາຕ່າງ ໆ ໃນພຣະຄຳຂອງພຣະເຈົ້າ ເພິ່ນຈຶ່ງກ້າວໄປຂ້າງໜ້າໂດຍບໍ່ຫວັ່ນໄຫວຕໍ່ສິ່ງໃດທັງໝົດ. ພຣະເຈົ້າຊົງຮັກສາຊີວິດຂອງໄວຄຼິບໄວ້ ແລະ ກຽມເພິ່ນສຳລັບວຽກງານທີ່ສຳຄັນທີ່ສຸດໃນຊີວິດຂອງເພິ່ນ ໂດຍໃຫ້ເພິ່ນມີກຳລັງສະໝອງອັນແຈ້ມຄົມ ແລະ ປະສົບການທີ່ຫຼາກຫຼາຍ. ໃນຂະນະທີ່ປະເທດຕ່າງ ໆ ທີ່ນັບຖືສາສະໜາຄຣິສກຳລັງປະເຊີນກັບຄວາມວຸ້ນວາຍ ໄວຄຼິບກໍຢູ່ໃນບ້ານພັກອາຈານໃນເມືອງລັດເຕີເວີດ ຕັ້ງໜ້າຕັ້ງຕາເຮັດພາລະກິດທີ່ເພິ່ນຕັ້ງໃຈໄວ້ ໂດຍບໍ່ສົນໃຈກັບລົມພະຍຸທີ່ພັດກະໜ່ຳຢູ່ຂ້າງນອກ. *{GC 88.1}*

ໃນທີ່ສຸດພາລະກິດຂອງໄວຄຼິບກໍສຳເລັດ ຄືການແປພຣະຄຳພີເປັນພາສາອັງກິດເປັນຄັ້ງທຳອິດ; ຄົນໃນປະເທດອັງກິດຈຶ່ງສາມາດເປີດອ່ານພຣະຄຳຂອງພຣະເຈົ້າໄດ້. ບັດນີ້ ໄວຄຼິບບໍ່ຢ້ານກົວທີ່ຈະຕິດຄຸກ ຫຼື ຖືກປະຫານດ້ວຍການເຜົາໄຟ. ເພິ່ນໄດ້ມອບແສງສະຫວ່າງໄວ້ໃນມືຂອງຊາວອັງກິດ ເຊິ່ງຈະບໍ່ມີວັນດັບມອດຈັກເທື່ອ. ໃນການມອບພຣະຄຳພີໃຫ້ຄົນຮ່ວມຊາດຂອງຕົນນັ້ນ ເພິ່ນໄດ້ທະລາຍພັນທະນາການແຫ່ງຄວາມໂງ່ຈ້າ ແລະ ຄວາມຊົ່ວຊ້າ, ແຖມຍັງປົດປ່ອຍ ແລະ ຍົກລະດັບປະເທດຂອງເພິ່ນໃຫ້ບັນລຸຜົນໄດ້ດີກວ່າຜົນງານທີ່ເຄີຍໄດ້ຮັບຈາກໄຊຊະນະໃນສົງຄາມ. *{GC 88.2}*

ໃນສະໄໝນັ້ນຍັງບໍ່ທັນມີການພິມໜັງສືເທື່ອ; ສະນັ້ນ, ການຄັດລອກສຳເນົາພຣະຄຳພີຕ້ອງໃຊ້ແຮງງານ ແລະ ເວລາຫຼາຍ. ແຕ່ເນື່ອງຈາກມີຄົນຈຳນວນຫຼາຍສົນໃຈຢາກໄດ້ພຣະຄຳພີ, ດັ່ງນັ້ນ ຈຶ່ງມີຫຼາຍຄົນເຕັມໃຈລົງມືຊ່ວຍໃນການຄັດລອກ, ຢ່າງໃດກໍຕາມ ກໍມີຄວາມລຳບາກໃນການຄັດລອກພຣະຄຳພີໃຫ້ທັນກັບຄວາມຕ້ອງການ. ຄົນຮັ່ງມີບາງຄົນຕ້ອງການພຣະຄຳພີທັງເຫຼັ້ມ, ສ່ວນຄົນອື່ນກໍ

[7] ໂດບິນເຍ, ເຫຼັ້ມ 17, ບົດ. 7.

ສັ່ງຊື້ພຽງແຕ່ສ່ວນໃດສ່ວນໜຶ່ງເທົ່ານັ້ນ, ໃນຫຼາຍ ໆ ຄັ້ງມີຫຼາຍຄອບຄົວຮ່ວມທຶນກັນເພື່ອຊື້ພຣະຄຳພີທັງເຫຼັ້ມ. ດັ່ງນັ້ນ, ໃນບໍ່ຊ້າພຣະຄຳພີທີ່ໄວຄລິບແປກໍສາມາດເຂົ້າໄປໃນບ້ານເຮືອນຂອງປະຊາຊົນ. {GC 88.3}

ການຮຽກຮ້ອງໃຫ້ຄົນຄິດຢ່າງມີເຫດມີຜົນໄດ້ກະຕຸ້ນປະຊາຊົນໃຫ້ຕື່ນຈາກການຍອມເຮັດຕາມຫຼັກຄຳສອນຂອງສັນຕະປາປາໂດຍບໍ່ຢັ້ງຄິດ. ບັດນີ້ ໄວຄລິບສອນຫຼັກຂໍ້ເຊື່ອສຳຄັນຂອງໂປຣແຕັສຕັງ ກໍຄື 1) ຄວາມລອດໂດຍຜ່ານທາງຄວາມເຊື່ອໃນພຣະຄຣິສ ແລະ 2) ພຣະຄຳພີເປັນບັນທັດຖານດຽວທີ່ບໍ່ມີຄວາມຜິດພາດ. ບັນດານັກເທດທີ່ເພີ່ນສົ່ງອອກໄປກໍເອົາພຣະຄຳພີໄປແຈກຈ່າຍພ້ອມກັບບົດຂຽນຂອງໄວຄລິບ ແລະ ໄດ້ຮັບຜົນສຳເລັດຫຼາຍ ຈົນເຮັດໃຫ້ປະຊາຊົນເກືອບເຄິ່ງໜຶ່ງຂອງປະເທດອັງກິດຍອມຮັບເອົາຫຼັກຄຳສອນໃໝ່ດັ່ງກ່າວ. {GC 89.1}

ຖືກຄຣິສຕະຈັກໂຣມຕໍ່ຕ້ານ

ການປາກົດຕົວຂອງພຣະຄຳພີເຮັດໃຫ້ພວກຜູ້ນຳຄຣິສຕະຈັກຕົກຕະລຶງ ເພາະວ່າຕອນນີ້ພວກເຂົາຕ້ອງຮັບມືກັບສິ່ງທີ່ມີອຳນາດຫຼາຍກວ່າຕົວໄວຄລິບ ເຊິ່ງອາວຸດຂອງພວກເຂົານັ້ນຈະບໍ່ສາມາດຕໍ່ກອນໄດ້. ໃນເວລານັ້ນບໍ່ມີກົດໝາຍໃນປະເທດອັງກິດທີ່ຫ້າມບໍ່ໃຫ້ຜູ້ໃດມີພຣະຄຳພີ ເພາະບໍ່ເຄີຍມີການເຜີຍແຜ່ພຣະຄຳພີໃນພາສາຂອງປະຊາຊົນມາກ່ອນ, ໃນເວລາຕໍ່ມາຈຶ່ງມີການປະກາດກົດໝາຍດັ່ງກ່າວ ເຊິ່ງຖືກບັງຄັບໃຊ້ຢ່າງເຂັ້ມງວດ. ແຕ່ໃນໄລຍະເວລາກ່ອນກົດໝາຍເຫຼົ່ານັ້ນ ກໍຍັງມີໂອກາດເລັກນ້ອຍໃນການເຜີຍແຜ່ພຣະທຳຂອງພຣະເຈົ້າ ເຖິງແມ່ນວ່າພວກບາດຫຼວງພະຍາຍາມຂັດຂວາງກໍຕາມ. {GC 89.2}

ພວກຜູ້ນຳຝ່າຍສັນຕະປາປາວາງແຜນອີກ ເພື່ອລະງັບພາລະກິດຂອງໄວຄລິບ. ເພິ່ນຖືກເອີ້ນໄປໃຫ້ການໃນສານເຖິງສາມຄັ້ງຕິດຕໍ່ກັນ ແຕ່ກໍບໍ່ມີຫຍັງເກີດຂຶ້ນ. ໃນຄັ້ງທຳອິດນັ້ນ, ທີ່ປະຊຸມສະພາຂອງພວກເຈົ້າຄະນະໄດ້ໃຫ້ການຖະແຫຼງວ່າ ບົດຄວາມທັງໝົດຂອງເພິ່ນເປັນຄຳສອນນອກຮີດ; ພວກເຂົາສາມາດໂນ້ມນ້າວໃຈກະສັດໜຸ່ມຣິດຊາດທີ 2 (Richard II) ໃຫ້ຢູ່ຝ່າຍພວກເຂົາ ຈົນໄດ້ຮັບຄຳສັ່ງໃຫ້ຈັບຂັງຄຸກທຸກຄົນທີ່ຖືຕາມຫຼັກຄຳສອນຂອງໄວຄລິບ. {GC 89.3}

ໄວຄລິບຈຶ່ງຍື່ນຄຳອຸທອນຄັດຄ້ານຄຳຕັດສິນຂອງສະພາເຈົ້າຄະນະຂຶ້ນໄປເຖິງລັດຖະສະພາ. ຢູ່ຕໍ່ໜ້າສະພາແຫ່ງຊາດດັ່ງກ່າວ ເພິ່ນໄດ້ຟ້ອງພວກຜູ້ນຳຄຣິສຕະຈັກຢ່າງບໍ່ຫວັ່ນໄຫວ ແລະ ຮຽກຮ້ອງໃຫ້ມີການປະຕິຮູບຄຣິສຕະຈັກ ເພາະຄຣິສຕະຈັກໄດ້ສົ່ງເສີມການໃຊ້ອຳນາດເກີນຂອບເຂດຢ່າງຮຸນແຮງ. ເພິ່ນບັນລະຍາຍໃຫ້ເຫັນເຖິງການແຍ່ງຊິງອຳນາດ ແລະ ການສໍ້ໂກງຕ່າງ ໆ ຂອງສັນຕະປາປາ; ການກະທຳເຊັ່ນນີ້ເຮັດໃຫ້ພວກສັດຕູຂອງເພິ່ນສັບສົນວຸ້ນວາຍ. ກ່ອນໜ້ານີ້ ບັນດາໝູ່ເພື່ອນ ແລະ ຜູ້ສະໜັບສະໜູນຂອງໄວຄລິບຖືກບັງຄັບໃຫ້ຍອມຈຳນົນ; ສະນັ້ນ, ພວກຝ່າຍຄຣິສຕະຈັກໂຣມຈຶ່ງຄາດຫວັງວ່າ ໄວຄລິບເອງກໍຄົງຕ້ອງກົ້ມກາບຕໍ່ອຳນາດຮວມຂອງກະສັດ ແລະ ຄຣິສຕະຈັກ ເພາະເພິ່ນແກ່ຊະລາ, ໂດດດ່ຽວ ແລະ ຂາດເພື່ອນສະໜິດມິດສະຫາຍ. ແຕ່ກົງກັນຂ້າມ ພວກຝ່າຍສັນຕະປາປາພັດເຫັນວ່າຕົນເອງເປັນຝ່າຍທີ່ພ່າຍແພ້. ລັດຖະສະພາໄດ້ຮັບການກະຕຸ້ນຈາກຄຳອຸທອນຂອງໄວຄລິບ ຈຶ່ງໄດ້ຍົກເລີກດຳລັດຈາກກະສັດທີ່ໃຊ້ໃນການກົດຂີ່ຂົ່ມເຫັງ ແລ້ວ ເພິ່ນກໍໄດ້ຮັບເສລີພາບອີກຄັ້ງ. {GC 89.4}

ໄວຄລິບຖືກນຳໄປຂຶ້ນສານເປັນຄັ້ງທີສາມ ຮອບນີ້ແມ່ນສານສາສະໜາອັນສູງສຸດໃນປະເທດອັງກິດ ເຊິ່ງໃນສານດັ່ງກ່າວຈະບໍ່ມີການສະແດງຄວາມເມດຕາຕໍ່ຄຳສອນນອກຮີດ. ພວກຝ່າຍສັນຕະປາປາຄິດວ່າ ຄຣິສຕະຈັກໂຣມຈະໄດ້ຮັບໄຊຊະນະໃນຄັ້ງນີ້ຢ່າງແນ່ນອນ ແລະ ພາລະກິດຂອງນັກປະຕິຮູບຄົນນີ້ຈະຖືກຢຸດຢັ້ງ. ຖ້າຫາກທຸກຢ່າງເປັນໄປຕາມຄວາມມຸ່ງໝາຍຂອງພວກເຂົາ ໄວຄລິບຈະຖືກບັງຄັບໃຫ້ຖອນຫຼັກຄຳສອນຕ່າງ ໆ ຂອງຕົນ ຫຼື ຈະຖືກສານຕັດສິນປະຫານຊີວິດດ້ວຍການເຜົາໄຟ. {GC 90.1}

ແຕ່ໄວຄຼິບບໍ່ຍອມຖອນຄຳສອນຄືນ ແລະ ບໍ່ໄດ້ປິດບັງຄວາມຮູ້ສຶກທີ່ແທ້ຈິງຂອງຕົນ. ເພິ່ນບໍ່ຫວັ່ນໄຫວແຕ່ຢືນຢັນວ່າຄຳສອນຂອງຕົນຖືກຕ້ອງ ແລະ ຕອບໂຕ້ຂໍ້ກ່າວຫາຕ່າງ ໆ ຂອງຄົນທີ່ກົດຂີ່ຂົ່ມເຫັງເພິ່ນ. ໄວຄຼິບລືມຮອດຕົນເອງ ແລະ ບໍ່ຄຳນຶງເຖິງຖານະການເປັນຜູ້ຖືກກ່າວຫາ ຫຼື ສະພາບການໃນເວລານັ້ນ; ຫາກແຕ່ເພິ່ນປະກາດວ່າ ບັນດາຜູ້ຟັງທັງຫຼາຍກຳລັງຢູ່ຕໍ່ໜ້າບັນລັງພິພາກສາຂອງພຣະເຈົ້າ. ເພິ່ນນຳເອົາແຜນອຸບາຍ ແລະ ການຫຼອກລວງຂອງພວກເຂົາມາຊັ່ງດ້ວຍຕາຊັ່ງແຫ່ງຄວາມຈິງອັນເປັນນິຣັນດອນ. ຄົນທີ່ຢູ່ໃນສານໄດ້ສຳຜັດເຖິງຣິດອຳນາດຂອງພຣະວິນຍານບໍຣິສຸດ ແລະ ພຣະເຈົ້າດົນຈິດດົນໃຈຜູ້ຟັງທັງຫຼາຍ ຈົນພວກເຂົາບໍ່ສາມາດອອກຈາກຫ້ອງນັ້ນໄດ້. ຖ້ອຍຄຳຂອງນັກປະຕິຮູບເປັນເໝືອນດັ່ງລູກທະນູຂອງພຣະເຈົ້າ ທີ່ແທງທະລຸຈິດໃຈຂອງຜູ້ຟັງ. ຄົນເຫຼົ່ານີ້ໄດ້ຟ້ອງໄວຄຼິບໃນຂໍ້ຫາເຜີຍແຜ່ຄຳສອນນອກຣີດ ບັດນີ້ເພິ່ນກັບຟ້ອງພວກເຂົາຄືນໃນຂໍ້ຫາດັ່ງກ່າວດ້ວຍເຫດຜົນທີ່ໜ້າເຊື່ອຖື. ເພິ່ນຖາມວ່າ ເປັນຫຍັງພວກເຂົາຈຶ່ງກ້າເຜີຍແຜ່ຄຳສອນທີ່ບໍ່ຈິງ? ຫຼືວ່າ ພວກເຂົາສອນຄວາມເທັດເພື່ອຈະໄດ້ຜົນປະໂຫຍດໃສ່ຕົນເອງ? ຖ້າຢ່າງນັ້ນ ກໍເທົ່າກັບເປັນການນຳເອົາພຣະຄຸນຂອງພຣະເຈົ້າມາເຮັດເປັນທຸລະກິດ. *{GC 90.2}*

ໃນທີ່ສຸດເພິ່ນກ່າວວ່າ: “ພວກທ່ານຄິດວ່າກຳລັງຕໍ່ສູ້ກັບໃຜ? ກຳລັງຕໍ່ສູ້ກັບຊາຍຊະລາຄົນໜຶ່ງທີ່ເປັນໄມ້ໃກ້ຝັ່ງບໍ? ບໍ່ແມ່ນເລີຍ ແຕ່ພວກທ່ານກຳລັງຕໍ່ສູ້ກັບຄວາມຈິງ, ຄືຄວາມຈິງທີ່ມີອຳນາດເຂັ້ມແຂງກວ່າພວກທ່ານ ແລະ ທີ່ຈະເອົາຊະນະພວກທ່ານ.”[8] ເມື່ອກ່າວຈົບແລ້ວ ເພິ່ນກໍຍ່າງອອກຈາກສານ ໂດຍບໍ່ມີສັດຕູຄູ່ອາຄາດຄົນໃດພະຍາຍາມຂັດຂວາງແຕ່ຢ່າງໃດ. *{GC 90.3}*

ພາລະກິດຂອງໄວຄຼິບໃກ້ຈະສຳເລັດ ທຸງແຫ່ງຄວາມຈິງທີ່ເພິ່ນໄດ້ຖືໄວ້ມາດົນນານ ຈະຕ້ອງຫຼຸດອອກຈາກມືຂອງເພິ່ນໃນບໍ່ຊ້າ ແຕ່ເພິ່ນຈະຕ້ອງເປັນພະຍານເຖິງຂ່າວປະເສີດແຫ່ງຄວາມຈິງອີກຄັ້ງໜຶ່ງ, ຈະຕ້ອງປະກາດເຖິງສັດຈະທຳຈາກຖານທີ່ໝັ້ນຂອງຄວາມເທັດນັ້ນເອງ. ໄວຄຼິບຖືກເອີ້ນໄປຂຶ້ນສານຂອງສັນຕະປາປາຢູ່ນະຄອນໂຣມ ເຊິ່ງເປັນສານທີ່ຕັດສິນປະຫານຊີວິດບັນດາໄພ່ພົນຜູ້ບໍຣິສຸດຂອງພຣະເຈົ້າມາຫຼາຍຫົນ. ເຖິງແມ່ນວ່າເພິ່ນຈະຮູ້ດີວ່າມີອັນຕະລາຍລໍຖ້າຢູ່ຂ້າງໜ້າ ເພິ່ນກໍຕັ້ງໃຈຈະໄປຕາມໝາຍສານ ແຕ່ເກີດອາການອຳມະພາດກະທັນຫັນ ເປັນເຫດໃຫ້ເພິ່ນເດີນທາງບໍ່ໄດ້. ເຖິງແມ່ນວ່າເພິ່ນບໍ່ສາມາດເວົ້າດ້ວຍສຽງທີ່ນະຄອນໂຣມ ແຕ່ເພິ່ນຕັ້ງໃຈທີ່ຈະກ່າວໂດຍຜ່ານທາງຈົດໝາຍ ເພາະເປັນສິ່ງທີ່ສາມາດເຮັດໄດ້. ໄວຄຼິບຈຶ່ງຂຽນຈົດໝາຍໄປຫາສັນຕະປາປາດ້ວຍຖ້ອຍຄຳທີ່ໃຫ້ຄວາມເຄົາລົບ ແລະ ສະແດງເຖິງຄວາມເປັນຄຣິສຕຽນ ແຕ່ໃນຂະນະດຽວກັນກໍຕຳໜິຢ່າງຮຸນແຮງຕໍ່ຄວາມຫຍິ່ງຍະໂສ ແລະ ຄວາມຫຼູຫຼາຟຸມເຟືອຍຂອງສຳນັກສັນຕະປາປາ ໂດຍມີເນື້ອໃນດັ່ງລຸ່ມນີ້: *{GC 90.4}*

ຈົດໝາຍຂອງໄວຄຼິບ

“ຂ້າພະເຈົ້າມີຄວາມຍິນດີທີ່ຈະເປີດເຜີຍ ແລະ ປະກາດຄວາມເຊື່ອຖືຂອງຂ້າພະເຈົ້າຕໍ່ຄົນທັງປວງ ໂດຍສະເພາະຕໍ່ເຈົ້າຄະນະແຫ່ງນະຄອນໂຣມ ກໍຄືສັນຕະປາປາ. ຂ້າພະເຈົ້າເຊື່ອວ່າ ຖ້າຖ້ອຍຄຳຂອງຂ້າພະເຈົ້າຖືກຕ້ອງ ແລະ ເປັນຄວາມຈິງ ເພິ່ນກໍຈະຍິນດີຢືນຢັນເຖິງຄວາມເຊື່ອຖືຂອງຂ້າພະເຈົ້າ ຫຼື ວ່າ ຖ້າມີປະການໃດບໍ່ຖືກຕ້ອງກໍຈະຊ່ວຍແນະນຳໃຫ້ປັບປ່ຽນແກ້ໄຂ.” *{GC 91.1}*

“ປະການທຳອິດ, ຂ້າພະເຈົ້າເຊື່ອວ່າ ຂ່າວປະເສີດຂອງພຣະຄຣິສແມ່ນພຣະບັນຍັດທັງໝົດຂອງພຣະເຈົ້າ; . . . ຂ້າພະເຈົ້າຍອມຮັບ ແລະ ຖືວ່າເຈົ້າຄະນະແຫ່ງນະຄອນໂຣມ, ໃນຖານະທີ່ເພິ່ນເປັນຕົວແທນຂອງພຣະຄຣິສໃນໂລກນີ້, ຕ້ອງຜູກພັນກັບກົດບັນຍັດແຫ່ງຂ່າວປະເສີດນັ້ນຫຼາຍກວ່າຄົນອື່ນ ໆ ທັງໝົດ; ເພາະວ່າຄວາມຍິ່ງໃຫຍ່ຂອງບັນດາສາວົກຂອງພຣະຄຣິສບໍ່ໄດ້ຢູ່ທີ່ກຽດສັກສີ ຫຼື ກຽດຕິຍົດ

[8] ໄວລີ (Wylie), ເຫຼັ້ມ 2, ບົດ 13.

ທາງໂລກ, ແຕ່ຢູ່ທີ່ການປະຕິບັດຕາມແບບຢ່າງຊີວິດຂອງພຣະຄຣິສຢ່າງໃກ້ຊິດ; . . . ເມື່ອພຣະຄຣິສດຳເນີນຊີວິດໃນໂລກນີ້ ພຣະອົງເປັນຄົນຍາກຈົນແສນເຂັນ, ພຣະອົງຍອມປະຕິເສດ ແລະ ປະຖິ້ມທັງອຳນາດ ແລະ ກຽດຕິຍົດທັງໝົດທາງໂລກ. . . .” *{GC 91.2}*

“ຜູ້ສັດຊື່ທຸກຄົນບໍ່ຄວນປະຕິບັດຕາມຄົນເຄັ່ງສາສະໜາຄົນໃດ ຫຼື ແມ່ນແຕ່ສັນຕະປາປາເອງ ນອກຈາກໃນເລື່ອງທີ່ພວກເຂົາປະຕິບັດຕາມອົງພຣະເຢຊູຄຣິສເຈົ້າ; ເພາະວ່າເປໂຕ ແລະ ລູກຊາຍທັງສອງຂອງເຊເບດາຍໄດ້ເຮັດຜິດ ເມື່ອພວກເຂົາປາຖະໜາກຽດຕິຍົດທາງໂລກ, ເພາະມັນບໍ່ສອດຄ່ອງກັບວິຖີຊີວິດຂອງພຣະຄຣິສ; ເພາະສະນັ້ນ, ເຮົາທັງຫຼາຍບໍ່ຄວນເຮັດຕາມຄວາມຜິດຂອງພວກເຂົາໃນເລື່ອງເຊັ່ນນີ້. . . .” *{GC 91.3}*

“ສັນຕະປາປາຄວນປ່ອຍອຳນາດການປົກຄອງຝ່າຍໂລກທັງໝົດໄວ້ກັບເຈົ້າໜ້າທີ່ບ້ານເມືອງທີ່ບໍ່ກ່ຽວຂ້ອງກັບສາສະໜາ ແລະ ຄວນແນະນຳບາດຫຼວງທັງໝົດໃນລະບອບຂອງເພິ່ນໃຫ້ປ່ອຍວາງອຳນາດເໝືອນກັນ, ເພາະວ່າພຣະຄຣິສຊົງກະທຳຢ່າງນັ້ນ ໂດຍສະເພາະຜ່ານທາງພວກອັກຄະສາວົກຂອງພຣະອົງ. ດ້ວຍເຫດນີ້, ຖ້າຫາກຂ້າພະເຈົ້າກະທຳຜິດປະການໃດໜຶ່ງທີ່ກ່າວໄວ້ແລ້ວຂ້າງເທິງ ຂ້າພະເຈົ້າຍິນດີນ້ອມຮັບໂທດ ແມ່ນການລົງໂທດປະຫານຊີວິດກໍຕາມຖ້າຈຳເປັນ. ຖ້າຫາກເປັນໄປຕາມຄວາມປະສົງຂອງຂ້າພະເຈົ້າແລ້ວ ຂ້າພະເຈົ້າຈະໄປລາຍງານຕົວຕໍ່ໜ້າເຈົ້າຄະນະແຫ່ງນະຄອນໂຣມຢ່າງແນ່ນອນ ແຕ່ພຣະຜູ້ເປັນເຈົ້າຊົງແຕະຕ້ອງຂ້າພະເຈົ້າ ຈົນເປັນເຫດໃຫ້ເດີນທາງບໍ່ໄດ້ ແລະ ຊົງສອນຂ້າພະເຈົ້າໃຫ້ເຊື່ອຟັງພຣະເຈົ້າຫຼາຍກວ່າມະນຸດ.” *{GC 91.4}*

ໄວຄຼິບກ່າວປິດທ້າຍຈົດໝາຍວ່າ: “ຂໍໃຫ້ທຸກຄົນອະທິຖານຕໍ່ພຣະເຈົ້າຂອງພວກເຮົາ ເພື່ອໃຫ້ພຣະອົງດົນຈິດດົນໃຈອົງສັນຕະປາປາເອີບານທີ 6 (Urban VI) ຂອງພວກເຮົາ ຕາມທີ່ເພິ່ນໄດ້ເລີ່ມຕົ້ນໄວ້ແລ້ວ ພ້ອມດ້ວຍພວກຄະນະບາດຫຼວງຂອງເພິ່ນ ໃຫ້ດຳເນີນຊີວິດຕາມແບບຢ່າງຂອງພຣະເຢຊູຄຣິສ, ເພື່ອໃຫ້ພວກເຂົາສັ່ງສອນປະຊາຊົນຢ່າງໄດ້ຜົນ ແລະ ເພື່ອປະຊາຊົນຈະໄດ້ເຮັດຕາມແບບຢ່າງຂອງພວກເຂົາຢ່າງສັດຊື່.”[9] *{GC 92.1}*

ຈົດໝາຍສະບັບນີ້ຂອງໄວຄຼິບໄດ້ສະແດງໃຫ້ສັນຕະປາປາ ແລະ ພວກພຣະຄາດີນັນຂອງເພິ່ນເຫັນເຖິງຄວາມອ່ອນນ້ອມຖ່ອມຕົນຂອງພຣະຄຣິສ ແລະ ເປີດເຜີຍຄວາມແຕກຕ່າງລະຫວ່າງພຣະອົງກັບ ຄົນທີ່ອ້າງວ່າເປັນຕົວແທນຂອງພຣະອົງ. ຊ້ຳບໍ່ໜຳ, ກໍຍັງສະແດງໃຫ້ຄົນໃນປະເທດຕ່າງ ໆ ທີ່ນັບຖືສາສະໜາຄຣິສເຫັນເຖິງຄວາມແຕກຕ່າງນີ້ເຊັ່ນກັນ. *{GC 92.2}*

ພຣະເຈົ້າຍັງຊົງຄຸ້ມຄອງ

ໄວຄຼິບຄິດວ່າເພິ່ນຈະຕ້ອງຖືກຂ້າຍ້ອນຄວາມສັດຊື່ຢ່າງແນ່ນອນ. ມີທັງກະສັດ, ສັນຕະປາປາ ແລະ ພວກເຈົ້າຄະນະຮ່ວມມືກັນເພື່ອຫວັງທຳລາຍຊີວິດຂອງເພິ່ນໃຫ້ພິນາດ; ເບິ່ງຄືວ່າ ເຫຼືອເວລາບໍ່ເທົ່າໃດເດືອນ ເພິ່ນຈະຕ້ອງຈົບຊີວິດລົງທີ່ຫຼັກປະຫານຢ່າງຫຼີກລ່ຽງບໍ່ໄດ້. ແຕ່ຄວາມກ້າຫານຂອງເພິ່ນບໍ່ສັ່ນຄອນ; ໄວຄຼິບກ່າວວ່າ: “ເປັນຫຍັງເຈົ້າເວົ້າເຖິງການສະຫຼະຊີວິດເພື່ອຄວາມເຊື່ອເໝືອນເປັນເລື່ອງທີ່ຫ່າງໄກ? ຈົ່ງເຫດສະໜາປະກາດຂ່າວປະເສີດຂອງພຣະຄຣິສໃຫ້ພວກຜູ້ນຳຄຣິສຕະຈັກທີ່ທະນົງຕົວຟັງ ແລ້ວຄວາມຕາຍຈະມາຫາເຈົ້າເອງ. ຈະໃຫ້ຂ້າພະເຈົ້າປິດປາກງຽບເພື່ອຈະໄດ້ມີຊີວິດຢູ່ຕໍ່ໄປຊັ້ນບໍ? . . . ບໍ່ມີທາງດອກ! ໃຫ້ຈູດໄຟທີ່ຫຼັກປະຫານໄວ້ເລີຍ, ຂ້າພະເຈົ້າລໍຖ້າມັນຢູ່.”[10] *{GC 92.3}*

[9] ຈອນ ຟັອກ (John Foxe), *ກິດຈະການ ແລະ ອະນຸສອນ*, ເຫຼັ້ມ 3, ໜ້າ 49, 50.
[10] ໂດບິນເຍ, ເຫຼັ້ມ 17, ບົດ 8.

ແຕ່ພຣະເຈົ້າຍັງຄົງປົກປ້ອງຄຸ້ມຄອງຜູ້ຮັບໃຊ້ຂອງພຣະອົງ. ຊາຍຄົນນີ້ຜູ້ທີ່ໄດ້ຢືນຢັດຢ່າງກ້າຫານ ຕະຫຼອດທັງຊີວິດເພື່ອປົກປ້ອງຄວາມຈິງ ແລະ ໄດ້ສ່ຽງຊີວິດຢູ່ທຸກມື້ທຸກວັນ ຈະຕ້ອງບໍ່ຕົກເປັນເຫຍື່ອແຫ່ງ ຄວາມໂກດຮ້າຍຂອງສັດຕູ. ໄວຄຼິບບໍ່ເຄີຍພະຍາຍາມປົກປ້ອງຕົນເອງ ແຕ່ພຣະເຈົ້າຊົງຄຸ້ມຄອງຮັກສາ ຊີວິດຂອງເພິ່ນ; ບັດນີ້, ເມື່ອພວກສັດຕູຮູ້ສຶກໝັ້ນໃຈວ່າເພິ່ນເໝືອນລູກໄກ່ຢູ່ໃນກຳມື ພຣະເຈົ້າຊົງນຳເພິ່ນ ອອກໄປໄກເກີນກວ່າທີ່ພວກເຂົາຈະເອື້ອມມືເຖິງ. ຂະນະທີ່ເພິ່ນກຳລັງຈະເລີ່ມປະກອບພິທີມະຫາສະໜິດ ໃນໂບດຂອງເພິ່ນຢູ່ເມືອງລັດເຕເວີດ ໄວຄຼິບກໍລົ້ມລົງຍ້ອນເປັນອຳມະພາດກະທັນຫັນ ແລະ ຕໍ່ມາບໍ່ດົນ ເພິ່ນກໍເສຍຊີວິດ. *{GC 92.4}*

ພຣະເຈົ້າຊົງມອບພາລະໜ້າທີ່ໃຫ້ໄວຄຼິບ ແລະ ຊົງໃສ່ພຣະຄຳແຫ່ງຄວາມຈິງໄວ້ໃນປາກຂອງ ເພິ່ນ, ນອກຈາກນັ້ນພຣະອົງຊົງເຝົ້າດູແລເພິ່ນ ເພື່ອໃຫ້ເພິ່ນປະກາດພຣະຄຳນັ້ນແກ່ປະຊາຊົນ. ຊີວິດ ຂອງເພິ່ນໄດ້ຮັບການພິທັກຮັກສາ ແລະ ພາລະກິດການງານຂອງເພິ່ນກໍໄດ້ສືບຕໍ່ຈົນຮາກຖານແຫ່ງການ ປະຕິຮູບສາສະໜາຄັ້ງໃຫຍ່ຖືກວາງລົງໄດ້ສຳເລັດ. *{GC 92.5}*

ໄວຄຼິບມີຊີວິດຢູ່ໃນສະໄໝຍຸກມືດ, ບໍ່ມີຜູ້ໃດບຸກເບີກທາງກ່ອນໜ້າເພິ່ນ ເພື່ອເພິ່ນຈະສາມາດ ໄດ້ແນວທາງໃນການວາງລະບົບການປະຕິຮູບຂອງເພິ່ນ. ໄວຄຼິບໄດ້ຮັບການບຳລຸງອຸ້ມຊູເໝືອນໂຢຮັນ ຜູ້ໃຫ້ບັບຕິສະມາ ເພື່ອເຮັດພັນທະກິດພິເສດໃຫ້ສຳເລັດ ຄືການປະກາດການເລີ່ມຕົ້ນແຫ່ງຍຸກສະໄໝ ໃໝ່. ຢ່າງໃດກໍຕາມ, ເພິ່ນໄດ້ສອນຄວາມຈິງຢ່າງເປັນລະບົບ ແລະ ມີຄວາມກົມກຽວກັນຢ່າງສົມບູນ ເຊິ່ງ ນັກປະຕິຮູບຄົນອື່ນ ໆ ທີ່ມາພາຍຫຼັງກໍບໍ່ສາມາດເຮັດໄດ້ດີກວ່າເພິ່ນ ແລະ ບາງຄົນກໍຍັງເຮັດບໍ່ເທົ່າເພິ່ນ ແມ່ນຫຼັງຈາກເພິ່ນເສຍຊີວິດໜຶ່ງຮ້ອຍປີ. ຮາກຖານທີ່ເພິ່ນວາງໄວ້ນັ້ນທັງກວ້າງ ແລະ ເລິກ, ໂຄງສ້າງ ນັ້ນກໍໝັ້ນຄົງ ແລະ ຖືກຕ້ອງຕາມຄວາມຈິງເຊັ່ນກັນ ຈົນຜູ້ທີ່ມາພາຍຫຼັງບໍ່ຈຳເປັນຕ້ອງຮື້ຖອນເພື່ອ ກໍ່ສ້າງຄືນໃໝ່. *{GC 93.1}*

ປະໂຫຍດຂອງພຣະຄຳພີ

ການປະຕິຮູບອັນຍິ່ງໃຫຍ່ທີ່ໄວຄຼິບເປັນຜູ້ເບີກທາງນັ້ນມີຈຸດກຳເນີດໃນພຣະຄຳຂອງພຣະເຈົ້າ; ການ ປະຕິຮູບນັ້ນໄດ້ນຳໄປສູ່ການປົດປ່ອຍຈິດສຳນຶກຜິດຊອບ ແລະ ຄວາມນຶກຄິດຂອງຜູ້ຄົນ, ພ້ອມທັງ ປົດປ່ອຍປະເທດຕ່າງ ໆ ທີ່ຖືກຜູກມັດກັບການຄອບງຳຂອງຄຣິສຕະຈັກໂຣມມາເປັນເວລາດົນນານໃຫ້ເປັນ ອິດສະຫຼະ. ພຣະຄຳຂອງພຣະເຈົ້າເປັນຕົ້ນກຳເນີດຂອງສາຍນ້ຳແຫ່ງພຣະພອນທີ່ຫຼັ່ງໄຫຼລົງມາດຸດດັ່ງ ນ້ຳແຫ່ງຊີວິດໃນທຸກຍຸກທຸກສະໄໝຕັ້ງແຕ່ສະຕະວັດທີ 14 ເປັນຕົ້ນມາ. ໄວຄຼິບຍອມຮັບເອົາພຣະຄຳພີ ດ້ວຍຄວາມເຊື່ອທີ່ໄຮ້ຂໍ້ສົງໄສວ່າ ເປັນການເປີດເຜີຍພຣະປະສົງຂອງພຣະເຈົ້າ ແລະ ໄດ້ຮັບການ ດົນໃຈຈາກພຣະອົງ; ເພິ່ນເຊື່ອວ່າພຣະຄຳພີເປັນບັນທັດຖານທີ່ພຽງພໍສຳລັບຄວາມເຊື່ອ ແລະ ການ ດຳເນີນຊີວິດ. ເພິ່ນໄດ້ຮັບການອົບຮົມລ້ຽງດູໃຫ້ຖືວ່າຄຣິສຕະຈັກໂຣມເປັນອົງກອນສັກສິດຂອງພຣະເຈົ້າທີ່ ປາສະຈາກຂໍ້ຜິດພາດ ແລະ ມີອຳນາດສູງສຸດ. ເພິ່ນຖືກສອນໃຫ້ນ້ອມຮັບຄຳສອນ ແລະ ທຳນຽມຕ່າງ ໆ ທີ່ຄຣິສຕະຈັກໂຣມກຳນົດຂຶ້ນ ແລະ ປະຕິບັດກັນມາເປັນເວລາພັນປີ ໂດຍບໍ່ໃຫ້ເພິ່ນຕັ້ງຂໍ້ໂຕ້ແຍ້ງ ໃດ ໆ, ແຕ່ເພິ່ນໄດ້ຫັນຫຼັງໃສ່ສິ່ງເຫຼົ່ານີ້ທັງໝົດ ເພື່ອຮັບຟັງພຣະທຳອັນບໍຣິສຸດຂອງພຣະເຈົ້າ. ພຣະຄຳພີ ຄືອຳນາດສູງສຸດທີ່ເພິ່ນກະຕຸ້ນຊຸກຍູ້ໃຫ້ຄົນທັງຫຼາຍຍອມຮັບ; ໄວຄຼິບສອນວ່າພຣະສຸຣະສຽງຂອງພຣະເຈົ້າ ທີ່ກ່າວຜ່ານພຣະຄຳພີ ເປັນສິ່ງທີ່ມີອຳນາດສູງສຸດພຽງຢ່າງດຽວ, ບໍ່ແມ່ນຖ້ອຍຄຳຂອງສັນຕະປາປາໃນ ຖານະກະບອກສຽງຂອງຄຣິສຕະຈັກ. ເພິ່ນສອນວ່າ ພຣະຄຳພີເປັນການເປີດເຜີຍນ້ຳພຣະໄທຂອງ ພຣະເຈົ້າທີ່ສົມບູນແບບ, ນອກຈາກນັ້ນ ກໍຍັງສອນວ່າ ມີແຕ່ພຣະວິນຍານບໍຣິສຸດອົງດຽວເທົ່ານັ້ນທີ່

ອະທິບາຍຄວາມໝາຍຂອງພຣະຄຳພີໄດ້ ແລະ ທຸກຄົນຕ້ອງຮຽນຮູ້ໜ້າທີ່ຮັບຜິດຊອບຂອງຕົນເອງດ້ວຍ ການສຶກສາຫຼັກຄຳສອນຂອງພຣະຄຳພີ. ສະນັ້ນ, ເພິ່ນຈຶ່ງຫັນຈິດໃຈຂອງຜູ້ຄົນອອກຈາກສັນຕະປາປາ ແລະ ຄຣິສຕະຈັກໂຣມໄປຍັງພຣະທຳຂອງພຣະເຈົ້າ. *{GC 93.2}*

ໄວຄລິບເປັນໜຶ່ງໃນນັກປະຕິຮູບທີ່ສຳຄັນທີ່ສຸດ ມີໜ້ອຍຄົນໃນປະຫວັດສາດຜູ້ທີ່ມາພາຍຫຼັງສາມາດ ທຽບເທົ່າເພິ່ນ; ເພິ່ນມີຄວາມສະຫຼາດປາດເປື່ອງ ແລະ ມີຄວາມຄິດຫຼັກແຫຼມ. ໄວຄລິບຢຶດໝັ້ນໃນ ຄວາມຈິງຢ່າງໝັ້ນຄົງແນ່ວແນ່ ແລະ ມີຄວາມກ້າຫານໃນການປົກປ້ອງຄວາມຈິງນັ້ນ. ລັກສະນະຂອງ ນັກປະຕິຮູບຄົນທຳອິດນີ້ຄື ຊີວິດທີ່ບໍຣິສຸດ, ຄວາມດຸໝັ່ນທີ່ບໍ່ຮູ້ອິດຮູ້ເມື່ອຍໃນການສຶກສາຄົ້ນຄວ້າ, ຄວາມ ຊື່ສັດສຸດຈະຣິດທີ່ບໍ່ເຜັນປ່ຽນ, ຄວາມຮັກເໝືອນຄວາມຮັກຂອງພຣະຄຣິສ ແລະ ຄວາມສັດຊື່ໃນພາລະກິດ ການຮັບໃຊ້ຂອງຕົນ. ໄວຄລິບມີຄຸນນະລັກສະນະດັ່ງກ່າວ ເຖິງແມ່ນວ່າເພິ່ນຢູ່ໃນຍຸກສະໄໝທີ່ດ້ອຍຄວາມ ຮູ້ ແລະ ມີຄວາມເສື່ອມເສຍທາງສິນລະທຳກໍຕາມ. *{GC 94.1}*

ອຸປະນິໄສຂອງໄວຄລິບເປັນຫຼັກຖານຢືນຢັນເຖິງພະລັງອຳນາດຂອງພຣະຄຳພີໃນການອົບຮົມບົ່ມນິໄສ ແລະ ປ່ຽນແປງຊີວິດຄົນ. ແມ່ນພຣະຄຳພີນັ້ນແຫຼະ ທີ່ເຮັດໃຫ້ເພິ່ນເປັນຢ່າງທີ່ເພິ່ນເປັນ. ຄວາມພະຍາຍາມ ເຂົ້າໃຈຫຼັກຄວາມຈິງສຳຄັນທີ່ພຣະເຈົ້າຊົງເປີດເຜີຍໃນພຣະຄຳພີນັ້ນໃຫ້ຄວາມສົດຊື່ນ ແລະ ເສີມສ້າງ ຄວາມສາມາດໃນທຸກດ້ານຂອງຊີວິດ. ການສຶກສາພຣະຄຳພີຊ່ວຍພັດທະນາຄວາມນຶກຄິດ, ເພີ່ມຄວາມ ເຂົ້າໃຈໃຫ້ແຫຼມຄົມ ແລະ ເຮັດໃຫ້ການພິຈາລະນາຕັດສິນສົມເຫດສົມຜົນ. ການສຶກສາພຣະຄຳພີ ຈະຊ່ວຍຍົກລະດັບຄວາມຄິດທັງປວງ, ຄວາມຮູ້ສຶກທຸກຢ່າງ ແລະ ຄວາມປາຖະໜາທັງສິ້ນໃຫ້ສູງ ຂຶ້ນ ເຊິ່ງບໍ່ມີການສຶກສາອື່ນໃດສາມາດເຮັດໄດ້. ການຄົ້ນຫາພຣະຄຳພີຊ່ວຍໃຫ້ຄົນມີຄວາມໝັ້ນຄົງ ໃນເປົ້າໝາຍ, ມີຄວາມມານະອົດທົນ, ຄວາມກ້າຫານ ແລະ ເຮັດໃຫ້ສາມາດຢືນຢັດໝັ້ນຄົງໂດຍ ບໍ່ຫວັ່ນໄຫວ; ນອກຈາກນັ້ນກໍຫຼໍ່ຫຼອມຈິດວິນຍານ ແລະ ຂັດເກົາອຸປະນິໄສ. ການສຶກສາຄົ້ນຄວ້າ ພຣະຄຳພີດ້ວຍຄວາມຈິງໃຈ ແລະ ຄວາມຢຳເກງ ຈະຊ່ວຍນຳຈິດໃຈຂອງຜູ້ສຶກສານັ້ນ ໃຫ້ເຊື່ອມຕໍ່ກັບ ພຣະປັນຍາອັນບໍ່ມີຈຳກັດຂອງພຣະເຈົ້າໂດຍກົງ ເຊິ່ງຈະເປັນມໍລະດົກໃຫ້ໂລກມີບຸກຄົນທີ່ມີສະຕິປັນຍາ ທີ່ສະຫຼຽວສະຫຼາດ ແລະ ຄວາມນຶກຄິດທີ່ຫຼັກແຫຼມອ່ອງໄວ, ທັງຈະສ້າງບຸກຄົນທີ່ມີຄຸນນະທຳສູງ ກວ່າຜູ້ທີ່ສຶກສາຮ່ຳຮຽນປັດຊະຍາຂອງມະນຸດ. ຜູ້ປະພັນບົດເພງສັນລະເສີນກ່າວວ່າ: “ການອະທິບາຍຂໍ້ ຄຳສັ່ງສອນຂອງພຣະອົງໃຫ້ແສງສະຫວ່າງ ແລະ ນຳປັນຍາໃຫ້ແກ່ພວກຄົນໂງ່ຈ້າດ້ວຍ.” (ເພງສັນລະເສີນ 119:130). *{GC 94.2}*

ກຸ່ມໂລລາດສອນຕໍ່

ຫຼັກຄຳສອນຂອງໄວຄລິບຖືກກຸ່ມລູກສິດຂອງເພິ່ນເອົາໄປເຜີຍແຜ່ຕໍ່ຊ່ວງໄລຍະໜຶ່ງ. ກຸ່ມລູກສິດນີ້ ເປັນທີ່ຮູ້ຈັກກັນໃນນາມ “ນັກປະກາດຂອງໄວຄລິບ” ແລະ ພວກໂລລາດ (Lollards). ຄົນເຫຼົ່ານີ້ ບໍ່ພຽງແຕ່ເດີນທາງໄປທົ່ວປະເທດອັງກິດເທົ່ານັ້ນ ແຕ່ຍັງກະຈາຍໄປຍັງດິນແດນອື່ນ ໂດຍນຳຄວາມຮູ້ ເລື່ອງຂ່າວປະເສີດໄປນຳ. ເມື່ອຜູ້ນຳຂອງພວກເຂົາເສຍຊີວິດລົງແລ້ວ ນັກເທດເຫຼົ່ານີ້ຈຶ່ງເຮັດວຽກດ້ວຍ ຄວາມກະຕືລືລົ້ນຫຼາຍກວ່າເກົ່າ ແລະ ມີຄົນຈຳນວນຫຼວງຫຼາຍຫຼັ່ງໄຫຼໄປຟັງການສັ່ງສອນ; ມີຂຸນນາງ ບາງຄົນ ແລະ ແມ່ນແຕ່ຣາຊິນີກໍກັບໃຈຍ້ອນການປະກາດຂອງພວກເຂົາ. ພຶດຕິກຳຂອງປະຊາຊົນໄດ້ຮັບ ການປ່ຽນແປງໃນຫຼາຍພື້ນທີ່ ແລະ ຮູບເຄົາລົບຂອງຄຣິສຕະຈັກໂຣມກໍໄດ້ຖືກນຳອອກຈາກໂບດວິຫານ ທັງຫຼາຍ. ແຕ່ບໍ່ຊ້າ ພະຍຸການຂົ່ມເຫັງທີ່ໂຫດຮ້າຍໄດ້ພັດຖະຫຼົ່ມໃສ່ຜູ້ທີ່ກ້າຮັບພຣະຄຳພີເປັນແນວທາງ ຊີວິດຂອງຕົນຢ່າງບໍ່ຮູ້ປານີ. ກະສັດທັງຫຼາຍຂອງອັງກິດທີ່ສືບຕໍ່ກັນ ກໍມີຄວາມທະເຍີທະຍານທີ່ຈະ

ເສີມສ້າງອຳນາດຂອງຕົນໃຫ້ເຂັ້ມແຂງຂຶ້ນ ໂດຍອາໄສແຮງສະໜັບສະໜູນຈາກຄຣິສຕະຈັກໂຣມ ຈຶ່ງສັ່ງໃຫ້ຂ້າພວກນັກປະຕິຮູບໂດຍບໍ່ຄິດເສຍດາຍ. ນັບວ່າເປັນຄັ້ງທຳອິດໃນປະຫວັດສາດຂອງປະເທດອັງກິດທີ່ມີການອອກຄຳສັ່ງປະຫານຊີວິດເຫຼົ່າສາວົກແຫ່ງຂ່າວປະເສີດດ້ວຍການເຜົາໄຟ. ການປະຫັດປະຫານດັ່ງກ່າວໄດ້ສືບຕໍ່ເນື່ອງກັນ. ເມື່ອຜູ້ປະກາດຄວາມຈິງເຫຼົ່ານີ້ຖືກຫ້າມປາມ ແລະ ຖືກທໍລະມານ, ພວກເຂົາໄດ້ແຕ່ສົ່ງສຽງຮ້ອງຂຶ້ນໄປຍັງພຣະເຈົ້າອົງຊົງຣິດ ເພື່ອທູນຂໍໃຫ້ພຣະອົງຊົງສະດັບຮັບຟັງ. ຄົນເຫຼົ່ານີ້ຖືກໄລ່ລ່າໃນຖານະສັດຕູຂອງຄຣິສຕະຈັກ ແລະ ຜູ້ທໍລະຍົດຕໍ່ແຜ່ນດິນ; ເຖິງຢ່າງໃດກໍຕາມ, ພວກເຂົາຍັງສືບຕໍ່ເທດສະໜາຢູ່ໃນສະຖານທີ່ລັບລີ້, ບາງຄັ້ງຢູ່ໃນກະຕູບຂອງຄົນຍາກຈົນ ບາງຄັ້ງຕ້ອງລີ້ຊ່ອນຢູ່ໃນຖ້ຳ ຫຼື ໂພງຫີນ. {GC 94.3}

ເຖິງແມ່ນວ່າຈະມີການກົດຂີ່ຂົ່ມເຫັງລຸກລາມຢ່າງດຸເດືອດ ແຕ່ກໍຍັງຄົງມີການປະທ້ວງຕໍ່ເນື່ອງເປັນເວລາຫຼາຍສະຕະວັດ ໂດຍລັກສະນະຂອງຄົນທີ່ປະທ້ວງນັ້ນຄື ມີຄວາມສະຫງົບ, ມີຄວາມສັດທາ ແລະ ຄວາມມານະອົດທົນ. ຄົນເຫຼົ່ານັ້ນຄັດຄ້ານຕໍ່ຄວາມເສື່ອມສັດທາທາງສາສະໜາທີ່ແຜ່ຫຼາຍໃນສະໄໝຂອງພວກເຂົາ. ຄຣິສຕຽນໃນຍຸກນັ້ນຮູ້ຄວາມຈິງພຽງສ່ວນໜຶ່ງເທົ່ານັ້ນ ແຕ່ພວກເຂົາໄດ້ຮຽນຮູ້ທີ່ຈະຮັກ ແລະ ປະຕິບັດຕາມພຣະຄຳຂອງພຣະເຈົ້າ ຈຶ່ງຍອມທົນທຸກເພື່ອພຣະຄຳນັ້ນ. ມີຄຣິສຕຽນຫຼາຍຄົນສະຫຼະຊັບສິນຝ່າຍໂລກເພື່ອສະໜັບສະໜູນງານຂອງພຣະຄຣິສ ເໝືອນຜູ້ຕິດຕາມພຣະເຢຊູໃນສະໄໝອັກຄະສາວົກ. ຜູ້ຄົນທີ່ຍັງມີເຮືອນຊານຢູ່ກໍຍິນດີໃຫ້ທີ່ພັກພິງແກ່ພີ່ນ້ອງທາງຄວາມເຊື່ອທີ່ຖືກເນລະເທດ ແລະ ເມື່ອພວກເຂົາເອງຖືກຂັບໄລ່ໄສ່ສົ່ງເຊັ່ນກັນ ພວກເຂົາກໍຍອມຮັບຖານະຄົນນອກສັງຄົມດ້ວຍຄວາມພໍໃຈ. ຫຼາຍພັນຄົນຢ້ານກົວຕໍ່ຄວາມໂກດແຄ້ນຂອງພວກກົດຂີ່ຂົ່ມເຫັງທີ່ຮຸນແຮງ ຈຶ່ງຍອມປະຖິ້ມຄວາມເຊື່ອ ເພື່ອແລກກັບເສລີພາບ. ເມື່ອຄົນເຫຼົ່ານີ້ຖືກປ່ອຍອອກຈາກຄຸກ ພວກເຂົາກໍສວມໃສ່ເສື້ອຄຸມທີ່ສະແດງເຖິງການຍອມຮັບຜິດ ແລະ ເພື່ອປະກາດວ່າຕົນໄດ້ກ້າວອອກຈາກຈຸດຢືນຂອງຕົວເອງໄປແລ້ວ. ເຖິງຢ່າງນັ້ນກໍຕາມ, ກໍຍັງມີຄົນຈຳນວນຫຼາຍທີ່ເປັນພະຍານເພື່ອຄວາມຈິງໂດຍບໍ່ຫວັ່ນໄຫວ, ໃນຄົນເຫຼົ່ານີ້ມີທັງຜູ້ທີ່ເກີດໃນຕະກູນສູງ ແລະ ຊາວບ້ານທີ່ຍາກຈົນ. ບາງຄົນຢືນຢັດເພື່ອຄວາມຈິງໃນຄຸກໃຕ້ດິນ, ບາງຄົນໃນ “ຫໍຄອຍຂັ້ງພວກໂລລາດ”[11] ແລະ ຄົນອື່ນຢືນຢັດທ່າມກາງແປວໄຟທີ່ປະຫານຊີວິດພວກເຂົາ. ພວກເຂົາມີຄວາມຊົ່ນຊື່ນຍິນດີທີ່ໄດ້ຮັບກຽດໃນການຮ່ວມທຸກກັບພຣະຄຣິສ. (ເບິ່ງ ຟີລິບປອຍ 3:10). {GC 95.1}

ຖືກພັດພາໄປສູ່ມະຫາສະໝຸດ

ຝ່າຍສັນຕະປາປາບໍ່ສາມາດຈັດການກັບໄວຄຼິບຕາມຄວາມຕ້ອງການໃນຂະນະທີ່ເພິ່ນຍັງມີຊີວິດຢູ່. ພວກເຂົາຍັງຄັບແຄ້ນແໜ້ນໃຈບໍ່ຫາຍ ຕາບໃດທີ່ກະດູກຂອງເພິ່ນຍັງນອນສະຫງົບຢູ່ໃນຂຸມຝັງສົບ. ຕໍ່ມາ 40 ກວ່າປີຫຼັງຈາກການເສຍຊີວິດ ກອງປະຊຸມສະພາຄຣິສຕະຈັກຄັ້ງໃຫຍ່ໃນເມືອງຄອນສະຕັນ (Constance) ມີມະຕິໃຫ້ຂຸດກະດູກຂອງເພິ່ນຂຶ້ນມາ ແລະ ເຜົາປະຈານໃນທີ່ສາທາລະນະ ແລ້ວເອົາຜົງກະດູກໂຍນຖິ້ມລົງຫ້ວຍນ້ຳທີ່ຢູ່ໃກ້ຄຽງ. ມີນັກຂຽນແຕ່ເກົ່າກ່ອນກ່າວວ່າ “ຫ້ວຍນ້ຳສາຍນີ້ໄດ້ພັດພາຜົງກະດູກຂອງໄວຄຼິບໄປຍັງແມ່ນ້ຳເອວອນ ຈາກແມ່ນ້ຳເອວອນໄຫຼລົງໄປສູ່ແມ່ນ້ຳເຊເວີນ, ຈາກແມ່ນ້ຳເຊເວີນໄຫຼໄປລົງຊ່ອງແຄບທະເລນ້ອຍ ແລະ ຈາກທະເລນ້ອຍກໍຖືກກະແສນ້ຳພັດພາອອກສູ່ມະຫາສະໝຸດ. ສະນັ້ນ, ຜົງກະດູກຂອງໄວຄຼິບຈຶ່ງເປັນສັນຍະລັກຂອງຄຳສອນຂອງເພິ່ນ ເຊິ່ງໃນ

[11] ຫໍຄອຍທີ່ໃຊ້ຂັ້ງລູກສິດຂອງທ່ານໄວຄຼິບ.

ປັດຈຸບັນໄດ້ແຜ່ກະຈາຍໄປທົ່ວໂລກ."[12] ສັດຕູຂອງໄວຄລິບບໍ່ໄດ້ຄິດເລີຍວ່າ ຄວາມມຸ່ງຮ້າຍຂອງພວກເຂົາ ຈະມີຄວາມໝາຍອັນເລິກເຊິ່ງເຖິງຂະໜາດນັ້ນ. *{GC 95.2}*

ຈອນ ຮັສ ແຫ່ງໂບຮີເມຍ ໄດ້ຮຽນຮູ້ຄວາມຜິດໃນຄຳສອນຂອງຄຣິສຕະຈັກໂຣມຫຼາຍຢ່າງຜ່ານງານຂຽນຂອງໄວຄລິບ ຈຶ່ງປະຕິເສດຄຳສອນເຫຼົ່ານັ້ນ ແລະ ເລີ່ມວຽກງານການປະຕິຮູບ. ສະນັ້ນ, ເມັດແຫ່ງຄວາມຈິງຈຶ່ງໄດ້ຖືກຫວ່ານລົງໄປໃນສອງປະເທດທີ່ຫ່າງໄກຈາກກັນ. ຈາກໂບຮີເມຍ ວຽກງານການປະກາດກໍໄດ້ຂະຫຍາຍອອກໄປສູ່ດິນແດນອື່ນ ໆ ແລະ ມີຜູ້ຄົນຫັນມາໃຫ້ຄວາມສົນໃຈກັບພຣະຄຳຂອງພຣະເຈົ້າທີ່ຖືກລືມເສຍມາເປັນເວລາດົນນານ. ດ້ວຍວ່າ ພຣະເຈົ້າກຳລັງກຽມທາງສຳລັບການປະຕິຮູບຄັ້ງໃຫຍ່. *{GC 96.1}*

[12] ທີ. ຟູນເລີ (T. Fuller), *ປະຫວັດຄຣິສຕະຈັກທີ່ເໝາະອັງກິດ*, ເຫຼັ້ມ 4, ໝວດ 2, ວັກ 54.



ໃນຂະນະທີ່ປະເທດຕ່າງ ໆ ທີ່ນັບຖືສາສະໜາຄຣິສກຳລັງປະເຊີນກັບຄວາມ
ວຸ້ນວາຍ ໄວຄຼິບກໍຢູ່ໃນບ້ານພັກອາຈານໃນເມືອງລັດເຕີເວີດ ຕັ້ງໜ້າຕັ້ງຕາເຮັດ
ພາລະກິດທີ່ເພິ່ນຕັ້ງໃຈໄວ້ ໂດຍບໍ່ສົນໃຈກັບລົມພະຍຸທີ່ພັດກະໜ່ຳຢູ່ຂ້າງນອກ.

ເບິ່ງໜ້າ 58.

Image generated with AI (Google Gemini).

6

ຣັສ ແລະ ເຈໂຣມ

ປະເທດໂບຮີເມຍກ່ອນໜ້າ ຈອນ ຣັສ

ຂ່າວປະເສີດຖືກປະກາດໃນປະເທດໂບຮີເມຍ (Bohemia) ຕັ້ງແຕ່ສະຕະວັດທີ 9. ມີການແປ ພຣະຄຳພີ ແລະ ການນະມັດສະການໃນພາສາຂອງປະຊາຊົນ. ແຕ່ອຳນາດຂອງສັນຕະປາປາເພີ່ມຂຶ້ນ ເທົ່າໃດ ພຣະຄຳຂອງພຣະເຈົ້າກໍຍິ່ງຖືກປິດບັງຫຼາຍຂຶ້ນເທົ່ານັ້ນ. ສັນຕະປາປາເກຼັກກໍຣີທີ 7 (Gregory VII) ເໝົາເອົາວ່າຕົນມີໜ້າທີ່ປາບປາມຄວາມຫຍິ່ງທະນົງໂຕຂອງກະສັດທັງຫຼາຍ ແລະ ມຸ່ງໝັ້ນເພື່ອ ໃຫ້ປະຊາຊົນຕົກເປັນທາດ; ສະນັ້ນ, ເພິ່ນຈຶ່ງອອກໃບປະກາດພິເສດຫ້າມບໍ່ໃຫ້ມີການນະມັດສະການ ພຣະເຈົ້າໃນພາສາໂບຮີເມຍ ໂດຍກ່າວອ້າງວ່າ: “ອົງຜູ້ສູງສຸດຊອບພຣະໄທໃຫ້ຄົນນະມັດສະການພຣະອົງ ໃນພາສາທີ່ພວກເຂົາບໍ່ຮູ້ຈັກ ແລະ ຄວາມຊົ່ວກັບຄຳສອນນອກຮີດຫຼາຍຢ່າງໄດ້ເກີດຂຶ້ນຍ້ອນການບໍ່ ປະຕິບັດຕາມກົດນີ້.”[1] ດັ່ງນັ້ນ, ຄຣິສຕະຈັກໂຣມຈຶ່ງປະກາດໃຫ້ດັບແສງຈາກພຣະຄຳຂອງພຣະເຈົ້າ ເພື່ອ ໃຫ້ປະຊາຊົນຖືກຂັງໄວ້ໃນຄວາມມືດ. ແຕ່ສະຫວັນໄດ້ຈັດຕຽມກຸ່ມຄົນອື່ນເພື່ອຄຸ້ມຄອງຮັກສາຄຣິສຕະຈັກ ເອົາໄວ້. ມີຊາວໂວດ໋ວ ແລະ ຊາວອັນບີເຈນ (Albigenses) ໜີຈາກບ້ານໃນປະເທດຝຣັ່ງ ແລະ ປະເທດ ອີຕາລີຍ້ອນຖືກກົດຂີ່ຂົ່ມເຫັງ, ຄົນເຫຼົ່ານີ້ມາທີ່ໂບຮີເມຍ ແລະ ເຖິງຈະບໍ່ກ້າສອນຢ່າງເປີດເຜີຍ ພວກເຂົາ ກໍປະກາດຢ່າງລັບ ໆ ດ້ວຍຄວາມຮ້ອນຮົນ. ສະນັ້ນ, ຫຼັກຄວາມເຊື່ອທີ່ແທ້ຈິງຈຶ່ງໄດ້ຮັບການຮັກສາໄວ້ ຢ່າງຕໍ່ເນື່ອງເປັນເວລາຫຼາຍສະຕະວັດ. *{GC 97.1}*

ກ່ອນສະໄໝຂອງ ຈອນ ຣັສ ມີບາງຄົນໃນປະເທດໂບຮີເມຍລຸກຂຶ້ນຕ້ານໜີຄວາມເສື່ອມເສຍທີ່ເກີດຂຶ້ນ ໃນຄຣິສຕະຈັກ ແລະ ປະນາມການຜິດສິນທຳຂອງປະຊາຊົນ. ມີຫຼາຍຄົນສົນໃຈການປະກາດຂອງ ພວກເຂົາ. ແຕ່ພວກຜູ້ນຳຄຣິສຕະຈັກເກີດຄວາມຢ້ານກົວ ຈຶ່ງລົງມືກົດຂີ່ຂົ່ມເຫັງສາວົກແຫ່ງຂ່າວປະເສີດ. ຄົນເຫຼົ່ານີ້ຕ້ອງຫຼົບລີ້ໄປນະມັດສະການຕາມພູຜາປ່າດົງ, ພວກເຂົາຖືກທະຫານໄລ່ລ່າ ແລະ ມີຫຼາຍຄົນ ຖືກປະຫານຊີວິດ. ຕໍ່ມາມີການປະກາດວ່າ ຖ້າຜູ້ໃດອອກຈາກຄຣິສຕະຈັກໂຣມ ກໍໃຫ້ປະຫານຊີວິດດ້ວຍ ການເຜົາໄຟ. ແຕ່ໃນຂະນະທີ່ພວກຄຣິສຕຽນຍອມສະຫຼະຊີວິດ ພວກເຂົາຍັງເຝົ້າຫວັງເຖິງໄຊຊະນະຂອງ ຂ່າວປະເສີດ. ມີຄົນໜຶ່ງທີ່ “ສອນວ່າມີທາງດຽວທີ່ຈະລອດໄດ້ ຄືດ້ວຍການເຊື່ອໃນພຣະຜູ້ຊ່ວຍໃຫ້ລອດ ທີ່ຖືກຄຶງໄວ້ເທິງໄມ້ກາງແຂນ.” ລາວກ່າວກ່ອນສິ້ນໃຈວ່າ: “ຄວາມໂກດຮ້າຍຂອງສັດຕູແຫ່ງຄວາມ ຈິງກຳລັງຊະນະພວກເຮົາໃນຂະນະນີ້ ແຕ່ຈະບໍ່ຊະນະຕະຫຼອດໄປ. ຈະມີປະຊາຊົນທຳມະດາຄົນໜຶ່ງ ເກີດມາ, ລາວຈະບໍ່ໃຊ້ດາບ ຫຼື ອຳນາດ ແຕ່ພວກສັດຕູຈະບໍ່ສາມາດຊະນະລາວໄດ້.”[2] ສະໄໝ ຂອງ ມາຕິນ ລູເທີ ຍັງອີກດົນ ແຕ່ໃນຂະນະນັ້ນມີຄົນໜຶ່ງກຳລັງເຕີບໂຕຂຶ້ນມາທີ່ຈະປະກາດຕໍ່ຕ້ານ ຄຣິສຕະຈັກໂຣມ ເຊິ່ງຄຳພະຍານຂອງເພິ່ນຈະປຸກປະເທດທັງຫຼາຍໃຫ້ຕື່ນ. *{GC 97.2}*

---

[1] ໄວລີ (Wylie), ເຫຼັ້ມ 3, ບົດ 1.

[2] ໄວລີ, ເຫຼັ້ມ 3, ບົດ 1.

ເດັກກຳພ້າກາຍເປັນນັກເທດພຣະຄຳ

ຈອນ ຮັສ ເກີດໃນຄອບຄົວທີ່ທຸກຍາກຂາດເຂີນ, ພໍ່ຂອງເພິ່ນເສຍຊີວິດໃນຂະນະທີ່ເພິ່ນອາຍຸຍັງນ້ອຍ. ສ່ວນແມ່ເປັນຄົນຢຳເກງພຣະເຈົ້າທີ່ຖືວ່າການສຶກສາ ແລະ ຄວາມຢຳເກງພຣະອົງເປັນຊັບສົມບັດອັນລ້ຳຄ່າທີ່ສຸດ, ນາງຈຶ່ງພະຍາຍາມທີ່ຈະມອບສິ່ງເຫຼົ່ານີ້ໃຫ້ແກ່ລູກຊາຍ. ຮັສ ຮຽນຢູ່ໂຮງຮຽນປະຈຳແຂວງ ແລ້ວຈຶ່ງຕໍ່ມະຫາວິທະຍາໄລຢູ່ເມືອງປຣັກ (Prague) ໂດຍໄດ້ຮັບທຶນການສຶກສາຄົນຍາກຈົນ. ແມ່ເດີນທາງໄປສົ່ງເພິ່ນທີ່ເມືອງປຣັກ; ນາງເປັນແມ່ໝ້າຍທີ່ຍາກຈົນ ບໍ່ມີຊັບສົມບັດເປັນເງິນຄຳທີ່ຈະມອບໃຫ້ລູກຊາຍ ແຕ່ໃນຂະນະທີ່ເດີນທາງໃກ້ຈະຮອດມະຫານະຄອນນັ້ນ ນາງໄດ້ຄູ້ເຂົ່າລົງຂ້າງລູກຊາຍໜຸ່ມທີ່ກຳພ້າພໍ່ ແລະ ອະທິຖານຂໍໃຫ້ພຣະບິດາເທິງສະຫວັນຊົງໂຜດອວຍພອນລູກ. ນາງບໍ່ຄິດເລີຍວ່າພຣະເຈົ້າຈະຊົງຕອບຄຳອະທິຖານຂອງນາງເກີນຄວາມຄາດໝາຍ. *{GC 98.1}*

ຢູ່ມະຫາວິທະຍາໄລ ຮັສ ມີຄວາມໂດດເດັ່ນໃນເລື່ອງຄວາມໝັ່ນພຽນໃນການສຶກສາ ແລະ ການພັດທະນາຄວາມຮູ້ຢ່າງໄວວາ; ເພິ່ນເປັນຄົນອ່ອນສຸພາບ ແລະ ໃຊ້ຊີວິດຢ່າງບໍ່ມີບ່ອນຕິ ທັງຍັງເປັນຄົນທີ່ມີມະນຸດສຳພັນດີ ຈົນເພິ່ນກາຍເປັນທີ່ນັບຖືຂອງທຸກຄົນ. ຮັສ ສັດທາໃນຄຣິສຕະຈັກໂຣມດ້ວຍຄວາມຈິງໃຈ ແລະ ເຝົ້າສະແຫວງຫາພຣະພອນດ້ານຈິດວິນຍານທີ່ຄຣິສຕະຈັກໂຣມອ້າງວ່າສາມາດໃຫ້ໄດ້. ໃນງານເທດສະການສະຫຼອງການຄົບຮອບທີ່ສຳຄັນ ຮັສຖວາຍເງິນຫຼຽນສຸດທ້າຍຈາກເງິນອັນໜ້ອຍນິດຂອງເພິ່ນ ເພື່ອໄປສາລະພາບບາບໃຫ້ບາດຫຼວງ ແລະ ເຂົ້າຮ່ວມໃນຂະບວນແຫ່ ເພື່ອຈະໄດ້ຮັບການອະໄພບາບຕາມທີ່ມີການສັນຍາໄວ້. ຫຼັງຈາກຮຽນຈົບມະຫາວິທະຍາໄລແລ້ວ ຮັສບວດເປັນບາດຫຼວງຂອງຄຣິສຕະຈັກໂຣມ ແລະ ໄດ້ກ້າວຂຶ້ນສູ່ຕຳແໜ່ງສູງຢ່າງໄວວາ ຈົນໄດ້ປະຈຳຢູ່ໃນຣາຊສຳນັກຂອງກະສັດ. ໃນຂະນະດຽວກັນເພິ່ນຍັງຮັບຕຳແໜ່ງສາດສະດາຈານ ແລະ ຕໍ່ມາກໍເປັນອະທິການບໍດີຂອງມະຫາວິທະຍາໄລດຽວກັນທີ່ເພິ່ນເຄີຍສຶກສາຮ່ຳຮຽນ. ໃນບໍ່ພໍເທົ່າໃດປີ, ນັກສຶກສາຜູ້ຮັບທຶນຄົນຍາກຈົນຜູ້ນີ້ ໄດ້ກາຍເປັນຄວາມພາກພູມໃຈຂອງຄົນທັງຊາດ ແລະ ຊື່ສຽງຂອງເພິ່ນກໍໂດ່ງດັງຢູ່ທົ່ວທະວີບເອີຣົບ. *{GC 98.2}*

ແຕ່ຮັສເລີ່ມການປະຕິຮູບໃນພາກສ່ວນອື່ນ. ຫຼັງຈາກບວດເປັນບາດຫຼວງບໍ່ເທົ່າໃດປີ, ເພິ່ນຖືກແຕ່ງຕັ້ງໃຫ້ເປັນນັກເທດປະຈຳໂບດເບັດເລເຮັມ. ຜູ້ທີ່ກໍ່ຕັ້ງໂບດແຫ່ງນີ້ໄດ້ເນັ້ນຄວາມສຳຄັນຂອງການເທດສະໜາໃນພາສາຂອງປະຊາຊົນ. ເຖິງແມ່ນວ່າຄຣິສຕະຈັກໂຣມຕໍ່ຕ້ານການກະທຳດັ່ງກ່າວກໍຕາມ, ແຕ່ການເທດສະໜາໃນພາສາທີ່ຄົນຟັງເຂົ້າໃຈຍັງບໍ່ໄດ້ຖືກຍົກເລີກທັງໝົດໃນປະເທດໂບຮີເມຍ. ຢ່າງໃດກໍຕາມ, ຄົນສ່ວນຫຼາຍບໍ່ຮູ້ຈັກຄຳສອນຂອງພຣະຄຳພີ; ສະນັ້ນ, ຄົນທຸກຊັ້ນໃນສັງຄົມຈຶ່ງເຮັດຜິດບາບຢ່າງຊົ່ວຊ້າທີ່ສຸດ. ຮັສເທດສະໜາປະນາມຄວາມຊົ່ວເຫຼົ່ານີ້ໂດຍບໍ່ໄວ້ໜ້າ ແລະ ອ້າງພຣະຄຳຂອງພຣະເຈົ້າເພື່ອຕອກຢ້ຳເຖິງຫຼັກຄວາມຈິງ ແລະ ຫຼັກການບໍຣິສຸດທີ່ເພິ່ນສອນ. *{GC 99.1}*

ເຈໂຣມ ນຳງານຂຽນຂອງໄວຄລິບເຂົ້າໂບຮີເມຍ

ປະຊາຊົນຄົນໜຶ່ງໃນເມືອງປຣັກຊື່ ເຈໂຣມ ເຊິ່ງຕໍ່ມາກໍກາຍເປັນເພື່ອນຮ່ວມງານໃກ້ຊິດຂອງຮັສ, ເມື່ອເຈໂຣມກັບມາຈາກອັງກິດ ເພິ່ນໄດ້ນຳບົດຄວາມຕ່າງ ໆ ຂອງໄວຄລິບຕິດຕົວມານຳ. ຣາຊິນີຂອງອັງກິດເປັນເຈົ້າຍິງຈາກໂບຮີເມຍ; ນາງໄດ້ຮັບເຊື່ອຕາມຄຳສອນຂອງໄວຄລິບ ຈຶ່ງໃຊ້ອິດທິພົນຂອງນາງເພື່ອກະຈາຍບົດຄວາມຂອງນັກປະຕິຮູບດັ່ງກ່າວທົ່ວບ້ານເກີດເມືອງນອນຂອງນາງ. ຮັສໄດ້ອ່ານບົດຄວາມເຫຼົ່ານີ້ດ້ວຍໃຈຈົດໃຈຈໍ່ ແລະ ເຊື່ອວ່າຜູ້ຂຽນເປັນຄຣິສຕຽນທີ່ມີຄວາມຈິງໃຈ ຈຶ່ງໂນ້ມອຽງທີ່ຈະຮັບເອົາແນວທາງການ

ປະຕິຮູບທີ່ໄວຄຼິບຊຸກຍູ້ສົ່ງເສີມນັ້ນ. ຮັສບໍ່ຮູ້ເລີຍ ແຕ່ເພິ່ນໄດ້ກ້າວລົງໄປສູ່ຫົນທາງທີ່ຈະນຳຕົນໃຫ້ຫ່າງ ອອກຈາກຄຣິສຕະຈັກໂຣມ. {GC 99.2}

ໃນຊ່ວງເວລານີ້, ມີຊາຍແປກໜ້າສອງຄົນຈາກປະເທດອັງກິດມາເຖິງເມືອງປຣັກ. ສອງຄົນນີ້ມີການ ສຶກສາ ແລະ ໄດ້ຮັບເອົາແສງສະຫວ່າງແຫ່ງຂ່າວປະເສີດ. ເຂົາທັງສອງໄດ້ເດີນທາງມາໄກເພື່ອປະກາດ ຂ່າວປະເສີດນັ້ນໃນປະເທດໂບຮີເມຍ. ພວກເຂົາເລີ່ມການປະກາດດ້ວຍການໂຈມຕີສັນຕະປາປາໂດຍ ກ່າວວ່າບໍ່ມີອຳນາດສູງສຸດ; ບໍ່ດົນເຈົ້າໜ້າທີ່ກໍຫ້າມພວກເຂົາບໍ່ໃຫ້ປະກາດ. ແຕ່ພວກເຂົາບໍ່ຍົກເລີກ ເປົ້າໝາຍທີ່ຕັ້ງໃຈໄວ້ ຈຶ່ງຫັນໄປໃຊ້ວິທີອື່ນ. ນອກຈາກການເປັນນັກເທດແລ້ວ ທັງສອງເປັນສິລະປິນ ຈຶ່ງ ສືບຕໍ່ໂດຍໃຊ້ຄວາມສາມາດໃນການວາດແຕ້ມ. ພວກເຂົາແຕ້ມຮູບສອງແຜ່ນ ແລະ ຕິດໄວ້ໃນບ່ອນ ທີ່ປະຊາຊົນຈະເຫັນໄດ້ງ່າຍ. ຮູບໜຶ່ງມາຈາກມັດທາຍ 21:5, ເປັນຮູບການສະເດັດເຂົ້ານະຄອນ ເຢຣູຊາເລັມຂອງພຣະເຢຊູຄຣິສຢ່າງ “ອ່ອນສຸພາບ ແລະ ນັ່ງເທິງຫຼັງລໍ” ຕາມດ້ວຍພວກສາວົກຂອງ ພຣະອົງທີ່ເດີນຕີນເປົ່າ ແລະ ໃສ່ເສື້ອຜ້າທີ່ເກົ່າ ແລະ ຊີດ. ສ່ວນອີກຮູບໜຶ່ງຄືການແຫ່ຂະບວນ ສະເດັດຂອງສັນຕະປາປາ ໂດຍທີ່ເພິ່ນໃສ່ເສື້ອຍາວຫຼູຫຼາ ແລະ ສວມມົງກຸດສາມຊັ້ນ. ເພິ່ນຂີ່ມ້າຢ່າງ ສະຫງ່າຜ່າເຜີຍ ມີຜູ້ເປົ່າແກເດີນນຳໜ້າ ແລະ ມີບັນດາພຣະຄາດີນັນ ແລະ ພວກຜູ້ນຳຄຣິສຕະຈັກ ເດີນນຳຫຼັງໂດຍໃສ່ເສື້ອຜ້າຫຼູຫຼາຟູ່ຟ່າ. {GC 99.3}

ຮູບພາບເຫຼົ່ານີ້ເປັນຄຳເທດສະໜາທີ່ຈັບໃຈຄົນທຸກຊົນຊັ້ນໃນສັງຄົມ. ຄົນຈຳນວນຫຼວງຫຼາຍພາກັນ ມາຢືນເບິ່ງ. ທຸກຄົນສາມາດອ່ານບົດຮຽນໃນຮູບເຫຼົ່ານັ້ນໄດ້ ແລະ ມີຫຼາຍຄົນຮູ້ສຶກສະເທືອນໃຈ ເມື່ອເຫັນ ຄວາມແຕກຕ່າງລະຫວ່າງຄວາມອ່ອນສຸພາບຂອງພຣະຄຣິສຜູ້ເປັນເຈົ້ານາຍ ກັບຄວາມຫຍິ່ງຈອງຫອງ ຂອງສັນຕະປາປາຜູ້ອ້າງວ່າເປັນຜູ້ຮັບໃຊ້ຂອງພຣະຄຣິສ. ເກີດຄວາມວຸ້ນວາຍໃນເມືອງປຣັກ ຄົນແປກໜ້າ ສອງຄົນນີ້ຈຶ່ງຕ້ອງອອກຈາກເມືອງເພື່ອຄວາມປອດໄພ ແຕ່ປະຊາຊົນບໍ່ລືມບົດຮຽນທີ່ໄດ້ຮັບ. ຈອນ ຮັສ ກໍ ປະທັບໃຈກັບຮູບພາບເຫຼົ່ານັ້ນຢ່າງເລິກເຊິ່ງ ເພິ່ນຈຶ່ງຫັນມາສຶກສາຄົ້ນຄວ້າພຣະຄຳພີ ແລະ ບົດຄວາມ ຂອງໄວຄຼິບຫຼາຍກວ່າເກົ່າ. ເຖິງແມ່ນວ່າໃນຂະນະນັ້ນເພິ່ນຍັງບໍ່ພ້ອມທີ່ຈະຮັບເອົາການປະຕິຮູບທຸກຢ່າງ ທີ່ໄວຄຼິບສອນກໍຕາມ ແຕ່ເພິ່ນເຫັນເຖິງທາດແທ້ຂອງລະບອບສັນຕະປາປາຢ່າງຊັດເຈນຍິ່ງຂຶ້ນ ຈຶ່ງມີ ຄວາມກະຕືລືລົ້ນຫຼາຍຂຶ້ນໃນການປະນາມຄວາມຈອງຫອງ, ຄວາມທະເຍີທະຍານ ແລະ ການສໍ້ໂກງ ຂອງພວກຜູ້ນຳຄຣິສຕະຈັກໂຣມ. {GC 100.1}

ໃນຄາວນັ້ນ, ເນື່ອງຈາກຄວາມວຸ້ນວາຍທີ່ເກີດຂຶ້ນໃນມະຫາວິທະຍາໄລປະຈຳເມືອງປຣັກ ມີນັກ ສຶກສາຊາວເຢຍລະມັນຫຼາຍຮ້ອຍຄົນກັບເມືອບ້ານ ເປັນເຫດໃຫ້ແສງສະຫວ່າງໄດ້ສ່ອງຈາກປະເທດ ໂບຮີເມຍໄປຍັງປະເທດເຢຍລະມັນ. ໃນນັກສຶກສາເຫຼົ່ານີ້ ມີຫຼາຍຄົນທີ່ ຈອນ ຮັສ ເປັນຜູ້ສອນ ພຣະຄຳພີຄັ້ງທຳອິດ ແລະ ເມື່ອພວກເຂົາກັບໄປຍັງບ້ານເກີດເມືອງນອນຈຶ່ງເຜີຍແຜ່ຂ່າວປະເສີດ ທີ່ນັ້ນ. {GC 100.2}

ປະກາດຫ້າມບໍ່ໃຫ້ມີພິທີທາງສາສະໜາ

ມີຄົນນຳຂ່າວເລື່ອງການປະກາດທີ່ເມືອງປຣັກໄປລາຍງານທີ່ນະຄອນໂຣມ, ໃນບໍ່ຊ້າຮັສໄດ້ຮັບໝາຍ ຮຽກໃຫ້ໄປລາຍງານຕົວຕໍ່ໜ້າສັນຕະປາປາ. ຖ້າຫາກວ່າເພິ່ນຈະປະຕິບັດຕາມໝາຍຮຽກນັ້ນ ກໍຄົງ ຕ້ອງຕາຍຢ່າງແນ່ນອນ. ກະສັດ ແລະ ພຣະຣາຊິນີແຫ່ງໂບຮີເມຍ ພ້ອມດ້ວຍຄະນາຈານຈາກ ມະຫາວິທະຍາໄລ, ພວກຂຸນນາງ ແລະ ເຈົ້າໜ້າທີ່ຂອງລັດຮ່ວມກັນຂໍຮ້ອງສັນຕະປາປາໃຫ້ຮັສໄດ້ຢູ່ຕໍ່ທີ່ ເມືອງປຣັກ ແລະ ໃຫ້ຕົວແທນຂອງເພິ່ນເປັນຜູ້ໃຫ້ການແທນຢູ່ນະຄອນໂຣມ. ແຕ່ແທນທີ່ຈະອະນຸຍາດ

ຕາມຄຳຂໍຮ້ອງດັ່ງກ່າວ ສັນຕະປາປາໄດ້ພິຈາລະນາຄະດີ ແລະ ຕັດສິນໂທດຣັສ ແລ້ວປະກາດສັ່ງຫ້ າມ ບໍ່ໃຫ້ມີການເຄື່ອນໄຫວທາງສາສະໜາໃນເມືອງປຣັກ. {GC 100.3}

ໃນສະໄໝນັ ້ນ ການປະກາດຫ້ ามເຊັ ່ນນີ ້ຈະເຮັ ດໃຫ ້ຄົ ນທັ ງຫຼ າຍຕົ ກໃຈຢ ້ ານ. ພິ ທີ ກຳ ທີ ່ ປະກອບການ ປະກາດດັ ່ ງກ ່ າວໄດ ້ ຈັ ດຂຶ ້ ນໃນລັ ກສະນະທີ ່ ໃຫ ້ ຄົ ນສະທ ້ ານຢ ້ ານກົ ວ ເພາະປະຊາຊົ ນເຊື ່ ອວ ່ າສັ ນຕະປາປາ ເປັ ນຕົ ວແທນຂອງພຣະເຈົ ້ າ ແລະ ຖື ລູ ກກະແຈແຫ ่ ງສະຫວັ ນ ແລະ ນະຣົ ກ; ນອກຈາກນັ ້ ນ, ຍັ ງເຊື ่ ອ ວ ่ າສັ ນຕະປາປາມີ ອ ຳ ນາດທີ ่ ຈະລົ ງໂທດໃນເລື ่ ອງທີ ่ ກ ່ ຽວຂ ້ ອງກັ ບການປົ ກຄອງ ແລະ ເລື ่ ອງທີ ่ ກ ່ ຽວກັ ບ ສາສະໜາດ ້ ວຍ. ພວກເຂົ າເຊື ่ ອວ ่ າ ປະຕູ ສະຫວັ ນໄດ ້ ປິ ດລົ ງສ ຳ ລັ ບປະຊາຊົ ນທີ ่ ອາໄສຢ ู ່ ໃນຂົ ງເຂດທີ ่ ຖື ກ ປະກາດຫ ้ ามທາງສາສະໜາ ແລະ ຕາບໃດທີ ่ ສັ ນຕະປາປາຍັ ງບ ่ ຍົ ກເລີ ກການປະກາດຫ ้ ามດັ ່ ງກ ່ າວ ຄົ ນ ຕາຍບ ่ ສາມາດເຂົ ้ າສະຫວັ ນໄດ ้ . ແລ ้ ວເພື ่ ອຕອກຢ ้ ຳ ເຖິ ງສະພາບທີ ่ ຮ ้ າຍແຮງນີ ้ ພິ ທີ ກ ຳ ທາງສາສະໜາ ທຸ ກຢ ่ າງຖື ກຍົ ກເລີ ກໄປ, ໂບດທັ ງຫຼ າຍຖື ກປິ ດລົ ງ ແລະ ພິ ທີ ແຕ ่ ງງານຕ ้ ອງຈັ ດຢ ู ່ ເດີ ່ ນໂບດ. ສ ่ ວນຄົ ນ ຕາຍນັ ້ ນ ກ ຳ ບ ่ ສາມາດຝັ ງຢ ู ່ ໃນແດນສັ ກສິ ດ ແຕ ่ ຖື ກຝັ ງຢ ู ່ ຕາມຮ ่ ອງ ຫຼ ື ຕາມທົ ่ ງນາໂດຍປາສະຈາກພິ ທີ ຝັ ງສົ ບ. ຄຣິ ສຕະຈັ ກໂຣມນ ຳ ໃຊ ้ ວິ ທີ ການທີ ่ ໃຫ ้ ຄົ ນຢ ้ ານກົ ວເຊັ ่ ນນີ ้ ເພື ่ ອຄວບຄຸ ມຈິ ດສ ຳ ນຶ ກຜິ ດຊອບຂອງ ຜ ู ้ ຄົ ນ. {GC 101.1}

ປະຊາຊົ ນໃນເມືອງປຣັ ກສັ ບສົ ນວຸ ້ ນວາຍ, ມີ ຄົ ນຈ ຳ ນວນຫຼ າຍປະນາມຣັ ສວ ่ າ ເປັ ນເຫດທີ ่ ເລື ่ ອງ ຮ ้ າຍແຮງນີ ้ ເກີ ດຂຶ ้ ນກັ ບພວກເຂົ າ ແລະ ຮ ຽກຮ ้ ອງໃຫ ้ ສົ ่ ງມອບຣັ ສແກ ่ ຄຣິ ສຕະຈັ ກໂຣມໃຫ ้ ຈັ ດການ. ຣັ ສ ຈຶ ่ ງກັ ບໄປບ ้ ານເກີ ດຂອງເພິ ่ ນເພື ่ ອໃຫ ้ ພະຍຸ ນີ ้ ສະຫງົ ບລົ ງ. ເພິ ่ ນຂຽນເຖິ ງໝ ู ่ ເພື ่ ອນທີ ่ ຍັ ງຢ ู ່ ເມືອງປຣັ ກວ ่ າ: “ທີ ่ ຂ ้ ອຍໄດ ้ ຖອນຕົ ວອອກໄປຈາກທ ่ າມກາງພວກເຈົ ้ າ ແມ ่ ນເພື ่ ອເຮັ ດຕາມຄ ຳ ສອນ ແລະ ແບບຢ ่ າງຂອງ ພຣະເຢຊູ ຄຣິ ສ ເພື ่ ອບ ่ ໃຫ ้ ຄົ ນທີ ่ ບ ่ ຫວັ ງດີ ເຮັ ດໃນສິ ่ ງທີ ่ ຈະຕ ้ ອງຮັ ບໂທດຕະຫຼ ອດນິ ຣັ ນ ແລະ ເພື ่ ອຈະບ ่ ເປັ ນເຫດໃຫ ้ ຄົ ນທີ ่ ມີ ສິ ນທ ຳ ໄດ ้ ຮັ ບຄວາມທຸ ກຍາກ ແລະ ການກົ ດຂີ ่ ຂົ ่ ມເຫັ ງ. ຂ ้ ອຍມາພັ ກສະຫງົ ບເພາະ ຄາດວ ่ າ ພວກບາດຫຼ ວງທີ ่ ປະໝາດພຣະເຈົ ้ າຄົ ງຫ ้ ามບ ่ ໃຫ ้ ມີ ການເທດສະໜາປະກາດພຣະຄ ຳ ຂອງ ພຣະອົ ງທ ่ າມກາງພວກເຈົ ้ າໄປອີ ກດົ ນ. ແຕ ่ ຢ ่ າງໃດກ ໍ ຕາມ, ການທີ ่ ຂ ้ ອຍຖອນຕົ ວນີ ้ ບ ่ ເປັ ນການປະຕິ ເສດ ຄວາມຈິ ງຂອງພຣະເຈົ ้ າ ເພາະດ ้ ວຍການເສີ ມ ກ ຳ ລັ ງຈາກພຣະອົ ງ ຂ ้ ອຍພ ้ ອມທີ ่ ຈະຕາຍ.”[3] ຣັ ສບ ่ ໄດ ้ ຢຸ ດການເຮັ ດວຽກ ແຕ ่ ໄດ ้ ເດີ ນທາງທົ ่ ວຊົ ນນະບົ ດໃນບໍ ລິ ເວນນັ ้ ນ ປະກາດຂ ่ າວປະເສີ ດໃຫ ้ ຝ ู ງຊົ ນທີ ่ ຮັ ບ ຟັ ງດ ้ ວຍຄວາມຍິ ນດີ . ສະນັ ้ ນ, ມາດຕະການທີ ่ ສັ ນຕະປາປາໃຊ ้ ເພື ่ ອຢັ ບຢັ ้ ງຂ ่ າວປະເສີ ດ ກ ໍ ເປັ ນເຫດໃຫ ้ ຂ ่ າວປະເສີ ດຍິ ่ ງຖື ກເຜີ ຍແຜ ่ ໃຫ ้ ຫຼ າຍຂຶ ้ ນ. “ເພາະວ ่ າເຮົ າຈະເຮັ ດສິ ่ ງໃດຂັ ດກັ ບຄວາມຈິ ງບ ่ ໄດ ้ ໄດ ้ ແຕ ่ ເຮັ ດ ເພື ่ ອຄວາມຈິ ງເທ ่ ານັ ้ ນ.” (2 ໂກຣິ ນໂທ 13:8 LO1972). {GC 101.2}

ກະຈ ่ າງແຈ ้ ງຂຶ ้ ນເທື ่ ອລະໜ ้ ອຍ

“ຊ ่ ວງນີ ้ ເບິ ่ ງຄື ວ ่ າ ຣັ ສກ ຳ ລັ ງຕ ่ ໍ ສ ู ้ ຢ ู ່ ໃນໃຈຢ ่ າງທຸ ກລະທົ ມ. ເຖິ ງແມ ่ ນວ ่ າຄຣິ ສຕະຈັ ກໂຣມຫວັ ງວ ่ າຈະ ເອົ າຊະນະເພິ ่ ນດ ้ ວຍການປະກາດຫ ้ ามຕ ่ າງໆ ແຕ ่ ເພິ ่ ນຍັ ງບ ่ ໄດ ้ ປະຕິ ເສດອ ຳ ນາດຂອງຄຣິ ສຕະຈັ ກ ດັ ່ ງກ ່ າວ. ເພິ ่ ນຍັ ງຖື ວ ่ າຄຣິ ສຕະຈັ ກໂຣມເປັ ນເຈົ ้ າສາວຂອງພຣະຄຣິ ສ ແລະ ສັ ນຕະປາປາເປັ ນຕົ ວແທນ ຂອງພຣະເຈົ ้ າ. ສິ ່ ງທີ ່ ຣັ ສຕ ่ ໍ ສ ู ้ ຢ ู ່ ນັ ້ ນແມ ่ ນການໃຊ ้ ອ ຳ ນາດໃນທາງທີ ่ ຜິ ດ ແຕ ่ ບ ่ ໄດ ้ ຕ ่ ໍ ສ ู ้ ໃນຫຼ ັ ກການທີ ่ ສອນ ວ ่ າຄຣິ ສຕະຈັ ກໂຣມມີ ອ ຳ ນາດດັ ່ ງກ ່ າວ. ມີ ການຕ ่ ໍ ສ ู ้ ຢ ู ່ ໃນໃຈຂອງເພິ ่ ນຢ ่ າງຮຸ ນແຮງ ລະຫວ ่ າງຄວາມ ເຂົ ้ າໃຈຂອງເພິ ่ ນກັ ບຈິ ດສ ຳ ນຶ ກຜິ ດຊອບ. ຖ ้ າອ ຳ ນາດຂອງສັ ນຕະປາປາມາດ ้ ວຍຄວາມຊອບທ ຳ ແລະ ບ ่ ສາມາດຜິ ດພາດໄດ ้ ດັ ່ ງທີ ่ ເພິ ่ ນເຊື ่ ອ ເປັ ນໄປໄດ ้ ຢ ่ າງໃດທີ ่ ເພິ ่ ນຮູ ้ ສຶ ກວ ่ າຈະຕ ้ ອງຂັ ດຂືນຕ ่ ໍ ອ ຳ ນາດນັ ้ ນ? ເພິ ่ ນ ເຫັ ນວ ่ າການທີ ่ ຈະເຊື ่ ອຟັ ງຄ ຳ ສັ ่ ງຂອງຄຣິ ສຕະຈັ ກໂຣມ ກ ໍ ເປັ ນບາບ, ແຕ ่ ໃນຂະນະດຽວກັ ນ ກ ໍ ຖາມຕົ ວເອງ

[3] ບອນໂຊ (Bonnechose), *ພວກນັ ກປະຕິ ຮູ ບກ ่ ອນການປະຕິ ຮູ ບຄັ ້ ງໃຫຍ ่ ,* ເຫຼ ັ ້ ມ 1, ໜ ้ າ 87.

ວ່າ ເປັນໄປໄດ້ຢ່າງໃດທີ່ການເຊື່ອຟັງຄຣິສຕະຈັກທີ່ບໍ່ສາມາດຜິດພາດໄດ້ນັ້ນຈະເປັນບາບ? ນີ້ຄືບັນຫາ ທີ່ເພີ່ນແກ້ບໍ່ຕົກ ແລະ ເປັນຂໍ້ສົງໄສທີ່ທໍລະມານໃຈຂອງເພີ່ນຢູ່ຕະຫຼອດເວລາ. ຄຳຕອບດຽວທີ່ເພີ່ນ ຮູ້ສຶກວ່າຟັງເຂົ້າທ່າທີ່ສຸດຄື ເຫດການແບບນີ້ໄດ້ເກີດຂຶ້ນອີກຄັ້ງ ເໝືອນທີ່ເຄີຍເກີດຂຶ້ນໃນສະໄໝທີ່ ພຣະຜູ້ຊ່ວຍໃຫ້ລອດຢູ່ໃນໂລກ ນັ້ນຄືພວກບາດຫຼວງຂອງຄຣິສຕະຈັກໄດ້ກາຍເປັນຄົນຊົ່ວ ແລະ ໃຊ້ ອຳນາດທີ່ໄດ້ມາຢ່າງຖືກຕ້ອງນັ້ນໄປໃນທາງທີ່ບໍ່ຖືກຕ້ອງ ເໝືອນພວກປະໂຣຫິດຊາວຢິວໃນສະໄໝຂອງ ພຣະເຢຊູ. ຈາກຄຳຕອບນີ້ເພີ່ນຈຶ່ງສະຫຼຸບວ່າ ການເຂົ້າໃຈຫຼັກຄຳສອນໃນພຣະຄຳພີເປັນແນວທາງ ດຳເນີນຊີວິດ. ເພີ່ນຈຶ່ງປະກາດສອນຄົນອື່ນວ່າ ໃນເລື່ອງການສຳນຶກຜິດຊອບນັ້ນຄວນໃຫ້ພຣະຄຳພີ ນຳທາງ. ເວົ້າງ່າຍໆ ສິ່ງທີ່ບໍ່ສາມາດຜິດພາດໄດ້ ແມ່ນພຣະເຈົ້າຜູ້ຊົງກ່າວໄວ້ໃນພຣະຄຳພີ ບໍ່ແມ່ນ ຄຣິສຕະຈັກໂຣມທີ່ກ່າວຜ່ານບາດຫຼວງ."[4] *{GC 102.1}*

ເມື່ອຄວາມອຸ້ນວາຍໃນເມືອງປຣັກສະຫງົບລົງ ຣັສກໍກັບໄປທີ່ໂບດເບັດເລເຮັມອັນເປັນໂບດປະຈຳຂອງ ເພີ່ນ ເພື່ອສືບຕໍ່ປະກາດພຣະຄຳຂອງພຣະເຈົ້າດ້ວຍຄວາມພິລະອາດຫານກວ່າເດີມ. ສັດຕູຂອງເພີ່ນມີ ອຳນາດ ແລະ ບໍ່ໄດ້ຢູ່ລ້າ ແຕ່ພຣະທາຊິນີ ແລະ ຊຸນນາງຫຼາຍຄົນເປັນມິດສະຫາຍຂອງເພີ່ນ; ນອກຈາກ ນັ້ນ, ມີປະຊາຊົນຈຳນວນຫຼວງຫຼາຍທີ່ເຂົ້າຂ້າງເພີ່ນ. ເມື່ອນຳເອົາຄຳສອນຂອງຣັສທີ່ໃສສະອາດ ແລະ ມີ ພະລັງພັດທະນາຄົນໃຫ້ດີຂຶ້ນ ມາປຽບທຽບກັບຄຳເທດສະໜາຂອງຄົນທີ່ສະໜັບສະໜູນຄຣິສຕະຈັກ ໂຣມ ເຊິ່ງມີແຕ່ບັນທອນຄົນໃຫ້ເສື່ອມລົງ, ແລະ ເມື່ອສົມທຽບຊີວິດອັນບໍຣິສຸດຂອງຣັສ ກັບຄວາມ ໂລບ ແລະ ຄວາມສຳມະເລເທເມົາຂອງພວກເຂົາແລ້ວ ຫຼາຍຄົນຈຶ່ງຖືວ່າເປັນກຽດທີ່ຈະຢູ່ຝ່າຍດຽວກັບ ຣັສ. *{GC 102.2}*

ກ່ອນໜ້ານີ້ຣັສເຮັດວຽກປະກາດຢູ່ຄົນດຽວ, ແຕ່ເຈໂຣມໄດ້ຮັບເອົາຄຳສອນຂອງໄວຄຼິບເມື່ອເພີ່ນຢູ່ ປະເທດອັງກິດ, ບັດນີ້ເພີ່ນຈຶ່ງຮ່ວມມືກັບຣັສໃນວຽກງານປະຕິຮູບ. ຕັ້ງແຕ່ນັ້ນມາຣັສກັບເຈໂຣມເປັນ ໜຶ່ງດຽວໃນຊີວິດ ແລະ ໃນຄວາມຕາຍກໍບໍ່ໄດ້ພາກຈາກກັນ. ໃນດ້ານຄຸນນະສົມບັດທີ່ຄົນສ່ວນຫຼາຍ ນິຍົມຊົມຊອບ ຄືສະຕິປັນຍາອັນປາດເປື່ອງ, ວາຈາທີ່ຄົມຄາຍ ແລະ ການສຶກສາສູງນັ້ນ ເຈໂຣມມີຫຼາຍ ກວ່າຣັສ. ສ່ວນຣັສມີຄຸນນະສົມບັດອັນເປັນແກ່ນກຳລັງໝັ້ນຄົງຂອງອຸປະນິໄສຫຼາຍກວ່າເຈໂຣມ. ການ ພິຈາລະນາຢ່າງມີສະຕິຂອງຣັສຊ່ວຍຢັບຢັ້ງຄວາມໃຈຮ້ອນຂອງເຈໂຣມ; ສ່ວນເຈໂຣມກໍເຫັນຄຸນຄ່າຂອງ ການວິເຄາະຂອງຣັສ ຈຶ່ງຍອມເຮັດຕາມຄຳແນະນຳນັ້ນດ້ວຍຄວາມນອບນ້ອມຖ່ອມຕົນ. ການປະຕິຮູບ ນັ້ນຈຶ່ງຂະຫຍາຍຢ່າງໄວວາພາຍໃຕ້ການຮ່ວມມືຂອງທັງສອງຄົນນີ້. *{GC 102.3}*

ພຣະເຈົ້າຊົງເລືອກຣັສ ກັບ ເຈໂຣມ ແລະ ຊົງໂຜດໃຫ້ແສງສະຫວ່າງແຫ່ງຄວາມຈິງສ່ອງເຂົ້າ ໄປໃນຈິດໃຈຂອງພວກເຂົາ ແລະ ຊົງເປີດເຜີຍໃຫ້ພວກເຂົາຮູ້ເຖິງຄວາມຜິດຫຼາຍຢ່າງໃນຄຣິສຕະຈັກ ໂຣມ, ແຕ່ເຂົາທັງສອງບໍ່ໄດ້ຮັບຄວາມສະຫວ່າງທັງໝົດທີ່ພຣະອົງຈະປະທານມາຍັງໂລກ. ພຣະອົງຊົງນຳ ປະຊາຊົນອອກຈາກຄວາມມືດມົນຂອງຄຣິສຕະຈັກໂຣມ ໂດຍຜ່ານຜູ້ຮັບໃຊ້ຂອງພຣະອົງສອງຄົນນີ້, ແຕ່ ມີອຸປະສັກຫຼາຍຢ່າງທີ່ພວກເຂົາຕ້ອງປະເຊີນ ພຣະອົງຈຶ່ງຊົງນຳພາໄປເທື່ອລະກ້າວຕາມທີ່ພວກເຂົາ ສາມາດຮັບໄດ້. ຣັສກັບເຈໂຣມບໍ່ພ້ອມທີ່ຈະຮັບແສງສະຫວ່າງທັງໝົດໃນເວລາດຽວກັນ ເພາະຖ້າສ່ອງ ທັງໝົດມາບາດດຽວ ກໍຈະເປັນເໝືອນແສງອັນແຮງກ້າຂອງທ່ຽງວັນສຳລັບຄົນທີ່ຢູ່ໃນຫ້ອງມືດເປັນເວລາ ດົນ ພວກເຂົາຄົງໄດ້ຫັນໜ້າໄປທາງອື່ນ. ສະນັ້ນ, ພຣະເຈົ້າຊົງສຳແດງຄວາມຈິງໃຫ້ຜູ້ນຳທັງສອງຄົນນີ້ ເທື່ອລະໜ້ອຍຕາມທີ່ປະຊາຊົນຈະຮັບໄດ້. ແລ້ວຫຼັງຈາກນັ້ນກໍມີຜູ້ຮັບໃຊ້ທີ່ສັດຊື່ຂອງພຣະເຈົ້າຕາມກັນມາ ຫຼາຍສະຕະວັດ ທີ່ຈະນຳພາປະຊາຊົນໄປໃນການປະຕິຮູບຕໍ່ໄປ. *{GC 103.1}*

[4] ໄວລີ, ເຫຼັ້ມ 3, ບົດ 2.

ສັນຕະປາປາສາມອົງພ້ອມກັນ

ການແຕກແຍກໃນຄຣິສຕະຈັກຍັງສືບຕໍ່. ມີສາມຄົນອ້າງວ່າຕົນແມ່ນສັນຕະປາປາທີ່ແທ້ຈິງ ແລະ ການຕໍ່ສູ້ລະຫວ່າງສາມຄົນນີ້ເຮັດໃຫ້ທຸກປະເທດທີ່ມີການນັບຖືສາສະໜາຄຣິສເຕັມໄປດ້ວຍອາດຊະຍາກຳ ແລະ ຄວາມອຸ້ນວາຍ. ສາມຄົນນີ້ຮູ້ສຶກວ່າ ການສາບແຊ່ງໃຫ້ຝ່າຍກົງກັນຂ້າມຕົກນະຣົກນັ້ນບໍ່ພຽງພໍ ຈຶ່ງຕໍ່ສູ້ກັນດ້ວຍອາວຸດ. ທັງສາມຄົນຫາຊື້ອາວຸດ ແລະ ຈ້າງທະຫານ. ແນ່ນອນກໍຕ້ອງໃຊ້ເງິນ, ພວກເຂົາຈຶ່ງຮັບຈ້າງເຮັດພິທີທາງສາສະໜາ, ຮັບເງິນເພື່ອແລກກັບຄຳອວຍພອນ ແລະ ຂາຍຕຳແໜ່ງຕ່າງໆ ຂອງຄຣິສຕະຈັກ. ພວກບາດຫຼວງກໍຮຽນແບບຜູ້ບັງຄັບບັນຊາໃນການນຳໃຊ້ສາສະໜາເພື່ອສະແຫວງຫາຜົນປະໂຫຍດ ແລະ ການເຮັດເສິກສົງຄາມເພື່ອປາບຄູ່ແຂ່ງ ແລະ ເສີມບາລະມີໃຫ້ກັບຕົນເອງ. ດ້ວຍຄວາມກ້າຫານທີ່ເພີ່ມຂຶ້ນທຸກວັນ ຣັສຈຶ່ງປະນາມຄວາມໜ້າລັງກຽດທີ່ຄົນທັງຫຼາຍຍອມໃຫ້ເກີດຂຶ້ນໃນນາມຂອງສາສະໜາ, ປະຊາຊົນຈຶ່ງກ່າວຫາພວກຜູ້ນຳຄຣິສຕະຈັກໂຣມຢ່າງເປີດເຜີຍ ວ່າເປັນຕົ້ນເຫດຂອງຄວາມທຸກທັງຫຼາຍທີ່ເກີດຂຶ້ນທົ່ວທຸກປະເທດທີ່ນັບຖືສາສະໜາຄຣິສ. *{GC 103.2}*

ນັບເປັນອີກຄັ້ງໜຶ່ງທີ່ເມືອງປຣັກເບິ່ງຄືວ່າ ໃກ້ຈະເກີດການຂ້າຟັນກັນຢ່າງເຕັມທີ່. ຜູ້ຮັບໃຊ້ຂອງພຣະເຈົ້າຖືກກ່າວຫາເໝືອນໃນສະໄໝພຣະຄຳພີເດີມ ວ່າເປັນ “ຜູ້ສ້າງຄວາມເດືອດຮ້ອນຫຼາຍທີ່ສຸດໃນອານາຈັກອິດສະຣາເອນ.” (1 ກະສັດ 18:17). ມີການປະກາດຫ້າມອີກຄັ້ງໜຶ່ງ ບໍ່ໃຫ້ມີການເຄື່ອນໄຫວທາງສາສະໜາໃນເມືອງປຣັກ; ຣັສຈຶ່ງຖອນຕົວກັບໄປຍັງໝູ່ບ້ານຂອງຕົນ. ຄຳພະຍານທີ່ເພີ່ນເຄີຍກ່າວຢ່າງສັດຊື່ຢູ່ໃນໂບດເບັດເລເຮັມນັ້ນໄດ້ຈົບລົງ. ຕໍ່ມາເພີ່ນຈະໄດ້ເປັນພະຍານໃນເວທີທີ່ກວ້າງຂຶ້ນ ກໍຄືປະເທດທັງຫຼາຍທີ່ນັບຖືສາສະໜາຄຣິສນັ້ນເອງ ກ່ອນທີ່ຈະຖືກຂ້າຕາຍເພາະການເປັນພະຍານຝ່າຍຄວາມຈິງ. *{GC 104.1}*

ເພື່ອປາບປາມຄວາມຊົ່ວຊ້າທີ່ກຳລັງເຮັດໃຫ້ປະເທດທັງຫຼາຍໃນເອີຣົບອຸ້ນວາຍຢູ່ນັ້ນ ມີການປະກາດໃຫ້ປະຊຸມສະພາທົ່ວໄປທີ່ເມືອງຄອນສະຕັນ (Constance). ຜູ້ປະກາດນັ້ນແມ່ນສັນຕະປາປາຈອນທີ 23 (John XXIII) ໜຶ່ງໃນສາມຄົນທີ່ອ້າງກັນວ່າເປັນສັນຕະປາປາ ຕາມຄວາມປາຖະໜາຂອງຈັກກະພັດຊີກິມົງ (Sigismund). ສັນຕະປາປາຈອນບໍ່ເຫັນດີກັບການຮຽກຮ້ອງໃຫ້ມີການຈັດປະຊຸມສະພາຂຶ້ນ ເພາະວ່າບໍ່ຢາກໃຫ້ມີຄົນສອບສວນເຖິງອຸປະນິໄສ ແລະ ພຶດຕິກຳຂອງຕົນ ເຖິງແມ່ນວ່າຜູ້ທີ່ຈະເຮັດການສອບສວນນັ້ນ ແມ່ນພວກຜູ້ນຳຄຣິສຕະຈັກ ທີ່ມີສິນລະທຳຫຼະຫຼົ່ມຫຼາຍຕາມແບບບາດຫຼວງທົ່ວໄປໃນສະໄໝນັ້ນ. ຢ່າງໃດກໍຕາມ, ເພີ່ນກໍບໍ່ກ້າຂັດໃຈຈັກກະພັດຊີກິມົງ. *{GC 104.2}*

ຈຸດປະສົງໃຫຍ່ຂອງປະຊຸມສະພາຄັ້ງນີ້ ແມ່ນການປະສານຮອຍແຕກແຍກໃນຄຣິສຕະຈັກ ແລະ ການກຳຈັດຄຳສອນນອກຮີດແບບຖອນຮາກຖອນໂຄນ. ສະນັ້ນ, ອີກສອງຄົນທີ່ປະກາດວ່າຕົນເປັນສັນຕະປາປາກໍຖືກຮຽກໃຫ້ເຂົ້າສະພານຳ ພ້ອມດ້ວຍ ຈອນ ຣັສ ຜູ້ນຳການເຜີຍແຜ່ແນວຄິດໃໝ່. ສັນຕະປາປາປອມທັງສອງຄົນຢ້ານເລື່ອງຄວາມປອດໄພ ຈຶ່ງບໍ່ໄດ້ໄປດ້ວຍຕົນເອງ ແຕ່ສົ່ງຕົວແທນໄປ. ສ່ວນສັນຕະປາປາຈອນທີ່ອອກໜ້າເປັນຜູ້ຮຽກປະຊຸມສະພານັ້ນ ກໍມາດ້ວຍຄວາມລັງເລໃຈ ເພາະສົງໄສວ່າຈັກກະພັດແອບມີແຜນລັບທີ່ຈະປົດເພີ່ນອອກຈາກຕຳແໜ່ງ. ເພີ່ນຍັງຢ້ານວ່າຈະຖືກລົງໂທດເພາະຄວາມຊົ່ວທີ່ເຮັດໃຫ້ມົງກຸດສາມຊັ້ນຂອງສັນຕະປາປາເປັນມົນທິນ ແລະ ເພາະອາດຊະຍາກຳທີ່ຕົນໄດ້ເຮັດເພື່ອຍາດເອົາມົງກຸດນັ້ນ. ຢ່າງໃດກໍດີ, ເພີ່ນໄດ້ແຕ່ຂະບວນເຂົ້າເມືອງຄອນສະຕັນຢ່າງສະຫງ່າຜ່າເຜີຍ ພ້ອມດ້ວຍພວກຜູ້ນຳຄຣິສຕະຈັກຊັ້ນສູງສຸດ ແລະ ເຈົ້າໜ້າທີ່ປະຈຳສັນຕະສຳນັກທີ່ເດີນມາຕາມຫຼັງ. ຄະນະເຈົ້າເມືອງ ແລະ ບາດຫຼວງນ້ອຍໃຫຍ່ທັງໝົດ ພ້ອມດ້ວຍປະຊາຊົນຈຳນວນຫຼວງຫຼາຍ ໄດ້ອອກໄປຕ້ອນຮັບສັນຕະປາປາຈອນ. ເຈົ້າໜ້າທີ່ສູງສີ່ຄົນຂອງເມືອງຖືຄັນຈ້ອງໃຫຍ່ສີທອງ

ໄວ້ເໜືອສີສະຂອງເພິ່ນ. ມີຄົນຖືເຂົ້າຈີ່ປະຈຳພິທີສິນລະນິກຍ່າງໄປຂ້າງໜ້າ; ສ່ວນເສື້ອຜ້າທີ່ຫຼູຫຼາຂອງ ພວກພຣະຄາດີນັນ ແລະ ພວກຂຸນນາງເປັນພາບທີ່ອະລັງການທີ່ສຸດ. {GC 104.3}

ຣັສໄປເມືອງຄອນສະຕັນ

ໃນຂະນະດຽວກັນ ຈອນ ຣັສ ກຳລັງເດີນທາງໃກ້ເຖິງເມືອງຄອນສະຕັນ ໂດຍຮູ້ຢູ່ໃນໃຈເຖິງອັນຕະລາຍ ທີ່ຈະຕ້ອງປະເຊີນ. ເພິ່ນອຳລາຍາດຕິພີ່ນ້ອງ ແລະ ໝູ່ເພື່ອນເໝືອນຈະບໍ່ມີວັນໄດ້ພົບກັນອີກ ແລ້ວ ກໍອອກເດີນທາງດ້ວຍຄວາມຮູ້ສຶກວ່າ ຫຼັກປະຫານລໍຢູ່ຂ້າງໜ້າ. ເຖິງແມ່ນວ່າເພິ່ນໄດ້ຮັບໃບຮັບຮອງ ຄວາມປອດໄພຈາກກະສັດຂອງໂบฮีเมยก่อนออกเดินทาง ແລະ ໄດ້ຮັບອີກໃบໜຶ່ງจากจักกะพัด ຊີກິມົ່ງໃນລະຫວ່າງການເດີນທາງ ແຕ່ເພິ່ນໄດ້ຈັດການສັ່ງເສຍທຸກຢ່າງ ເພາະຄາດວ່າຈະບໍ່ລອດກັບ ມາ. {GC 104.4}

ເພິ່ນຂຽนจົດໝາยไปยังพี่น้องอยู่เมืองปรักว่า: “ພີ່ນ້ອງຂອງຂ້າພະເຈົ້າເອີຍ, . . . ຂ້າພະເຈົ້າออก ເດີນທາງໄປ ເພື່ອປະເຊີນໜ້າกับสัตตูผู้ร้ายกาดของข้าพะเจ้าจำนวนหลวงหลาย ໂดยมีใบรับรอง ຄວາมปอดไพจากกะสัด. . . . ข้าพะเจ้าไว้วางใจพระเจ้าด้วยสิ้นสุดหัวใจ; พระองค์ชีวิตทา-นุพาบสูงสุด ແລะ ชีวเป็นพระผู้โผดให้พ้นของข้าพะเจ้า. ข้าพะเจ้าเชื่อวางใจว่า พระองค์ ຈະຮັบฟังคำอะทิถานของพวกเจ้าที่ทูนขอด้วยใจร้อนรน ແລะ ຈะประทานความรอบคอบ ແລะ ສะติปันยาของพระองค์ใส่ปากของข้าพะเจ้า ເพື່ອข้าพะเจ้าจะสามาดต้านทานพวก สัตตูได้. ข้าพะเจ้ายังเชื่อว่า พระองค์จะประทานพระวินยานบริสุดของพระองค์ ເพື່ອเสริม กำลังใช้ข้าพะเจ้าเข้มแขงอยู่ในความจริงของพระองค์ ເพื่อจะมีความก้าหานที่จะประเชิญหน้า กับการท์ดลอง, การติดคุก ແລะ ถ้าจำเป็นให้สามาดประเชิญหน้ากับความตายที่โหดร้าย ทาลุน. พระเยซูคริสชีวทันทุกเพื่อคริสตะจักอันเป็นที่รักของพระองค์; สะนั้น, พวกเราบ่ ควรประหลาดใจที่พระองค์ฝากแบบย่างของพระองค์ไว้ให้พวกเรา ເพื่อพวกเราจะสามาดอดทน ทุกย่างเพื่อความลอดพ้นของเราเอง. พระองค์ชีวเป็นพระเจ้า ແລะ ພวกเราเป็นฝีพระหัด ของพระองค์. พระเยซูชีวเป็นองค์พระผู้เป็นเจ้า ແລะ ພวกเราเป็นผู้รับใช้ของพระองค์. พระองค์ ชีวเป็นเจ้าเป็นนายเหนือโลกทังโลก ແລะ ພวกเราเป็นพยงมะนุดที่สามันทำมะดา, แต่พระองค์ ยังต้องทนทุก! แล้วมีเหดผนอันใดที่พวกเราบ่ควรมีความทุกแน่ โดยสะเพาะถ้าความทุก นั้นช่วยในการนำละเราให้บริสุด? พี่น้องที่รักทังหลาย ด้วยเหดนี้, ถ้าหากว่าความตาย ของข้าพะเจ้าจะช่วยถวายกยดแด่พระองค์ ขอให้พี่น้องช่วยอะทิถานให้มันจบไว ๆ ແລะ ขอ ให้พระองค์ชีวเสริมกำลังค้ำชูข้าพะเจ้าให้ยืนยัด บ่ว่าจะต้องประเชิญกับไพอันตะลายย่างใด กำตาม. แต่ถ้าหากว่า การกับไปหาพี่น้องนั้นดีกว่า ให้พวกเราอะทิถานต่อพระเจ้า ให้ ข้าพะเจ้ากับไปโดยบ่มีธอยมินทิน, ถือบ่ให้ข้าพะเจ้าปิดบังความจริงแห่งข่าวประเสิดแม่นแต่ ประเดันเลักน้อยที่สุด ເพื่อจะเป็นแบบย่างที่ดีให้พี่น้องดำเนินตาม. พวกเจ้าคงจะบ่เห็นหน้า ของข้าพะเจ้าที่เมืองปรักอีก แต่ถ้าเป็นน้ำพระไหของพระเจ้าผู้ชีวริดทานุพาบสูงสุด ที่จะ ชีวโผดให้ข้าพะเจ้าได้กับคืนไปหาพวกเจ้า ขอให้พวกเราก้าวหน้าต่อไปด้วยจิดใจที่หนักแหน่นยิ่ง ขึ้นในความรู้ ແລะ ความรักต่อกิดบันยัดของพระองค์.”[5] {GC 105.1}

ในจิดหมายอีกสะบับหนึ่งที่ขียนเถิงบาดหลวงคนหนึ่งที่มาเป็นสาวิกฝ่ายข่าวประเสิด, ຣัสกล่าว เถิงความผิดพาดของตนเองด้วยความถ่อมใจ ແລะ ตำหนิตนเองว่า: “ที่ผ่านมาข้าพะเจ้า

[5] บอนโฮด, เล้ม 1, หน้า 147, 148.

ເຄີຍມີຄວາມສຸກທີ່ໄດ້ໃສ່ເສື້ອຜ້າຫຼູຫຼາ ແລະ ເສຍເວລາໃນເລື່ອງທີ່ບໍ່ເກີດປະໂຫຍດ.” ຈາກນັ້ນເພິ່ນກໍໃຫ້ຄຳແນະນຳທີ່ໜ້າຈັບໃຈວ່າ: “ຂໍໃຫ້ເຈົ້າຄິດຄຳນຶງເຖິງການຖວາຍກຽດແດ່ພຣະເຈົ້າ ແລະ ໃນເລື່ອງຄວາມລອດຂອງຄົນອື່ນ ແທນທີ່ຈະຄິດເຖິງຜົນປະໂຫຍດຂອງຕຳແໜ່ງ ແລະ ການເປັນເຈົ້າຂອງທີ່ດິນ. ລະວັງຢ່າຕົບແຕ່ງເຮືອນຊານຫຼາຍກວ່າການປະດັບຈິດວິນຍານຂອງຕົນເອງ ແລະ ເໜືອສິ່ງອື່ນໃດທັງສິ້ນ ໃຫ້ເອົາໃຈໃສ່ຕໍ່ສະພາບຈິດວິນຍານຂອງຕົນ. ຈົ່ງຢ່າເກງພຣະເຈົ້າ ແລະ ຖ່ອມຕົວເມື່ອຢູ່ກັບຄົນຍາກຈົນ, ຢ່າເອົາຊັບສິນຂອງຕົນໄປເຜົາຜານດ້ວຍການຈັດງານລ້ຽງ. ຖ້າເຈົ້າບໍ່ປັບປຸງແກ້ໄຂຊີວິດ ແລະ ເລີກການໃຊ້ຈ່າຍໃນສິ່ງທີ່ເກີນຄວາມຈຳເປັນ ຂ້າພະເຈົ້າຢ້ານວ່າເຈົ້າຈະຕ້ອງຖືກຕິສອນຢ່າງໜັກ ເໝືອນທີ່ຂ້າພະເຈົ້າໄດ້ຖືກຕິສອນ. . . . ເຈົ້າຮູ້ຈັກຄຳສອນຂອງຂ້າພະເຈົ້າ ເພາະວ່າຂ້າພະເຈົ້າໄດ້ສັ່ງສອນເຈົ້າຕັ້ງແຕ່ເຈົ້າຍັງນ້ອຍ, ຈົ່ງບໍ່ຈຳເປັນໃຫ້ຂ້າພະເຈົ້າຊຸນເພີ່ມເຕີມໃຫ້ເຈົ້າ. ແຕ່ຂ້າພະເຈົ້າຂໍຮ້ອງເຈົ້າໂດຍອີງໃສ່ພຣະເມດຕາຂອງອົງພຣະຜູ້ເປັນເຈົ້າຂອງເຮົາ ຢ່າໄດ້ຢຽນແບບຂ້າພະເຈົ້າໃນເລື່ອງໄຮ້ສາລະທີ່ເຈົ້າເຄີຍເຫັນຂ້າພະເຈົ້າຫຼົງໄປເຮັດນັ້ນ.” ຣັສຈ່າໜ້າຂອງຈົດໝາຍວ່າ: “ຂໍຮ້ອງເພື່ອນ ຢ່າໄດ້ເປີດຈົດໝາຍສະບັບນີ້ຈົນກວ່າເຈົ້າແນ່ໃຈວ່າຂ້າພະເຈົ້າໄດ້ເສຍຊີວິດຈິງ.”[6] *{GC 105.2}*

ຕະຫຼອດການເດີນທາງ ຣັສໄດ້ເຫັນຫຼັກຖານເຖິງການແຜ່ຂະຫຍາຍຂອງຄຳສອນຂອງຕົນ ແລະ ເຫັນວ່າປະຊາຊົນທົ່ວໄປສະໜັບສະໜູນເພີ່ນ. ປະຊາຊົນພາກັນຫຼັ່ງໄຫຼອອກຈາກເຮືອນຊານບ້ານຊ່ອງເພື່ອຕ້ອນຮັບເພີ່ນ ແລະ ໃນບາງບ່ອນເຈົ້າເມືອງກໍອອກມາຍ່າງໄປນຳເພີ່ນຕາມຖະໜົນໃນເມືອງເພື່ອເປັນກຽດແກ່ເພີ່ນ. *{GC 106.1}*

ຄຳພະຍານທີ່ເຂັ້ມແຂງຈາກຫ້ອງຄຸມຂັງ

ເມື່ອຣັສໄປເຖິງເມືອງຄອນສະຕັນ ເພິ່ນໄດ້ຮັບອິດສະຫຼະຢ່າງເຕັມທີ່. ນອກຈາກໃບຮັບຮອງຄວາມປອດໄພຂອງຈັກກະພັດແລ້ວ ສັນຕະປາປາຍັງຮັບປາກວ່າຈະຄຸ້ມຄອງຄວາມປອດໄພໃຫ້ເພີ່ນ. ແຕ່ເຖິງແມ່ນວ່າຈະມີການຢືນຢັນຄວາມປອດໄພເປັນໝັ້ນເປັນເໝາະກໍຕາມ ບໍ່ຊ້າບໍ່ດົນສັນຕະປາປາກັບພວກພຣະຄາດິນັນກໍສັ່ງຈັບຣັສ ແລ້ວໂຍນເພິ່ນຖິ້ມລົງໃນຫ້ອງຂັງໃຕ້ດິນອັນເປັນບ່ອນທີ່ໜ້າຂະເຍື່ອຍິ່ງ. ຕໍ່ມາເພິ່ນກໍຖືກຍ້າຍໄປຂັງຢູ່ໃນຜາສາດຫີນອັນແຂງແກ່ນ ຢູ່ຟາກຝັ່ງກົງກັນຂ້າມຂອງແມ່ນ້ຳໄຣນ໌ (Rhine). ແຕ່ສັນຕະປາປາກໍບໍ່ໄດ້ຮັບຜົນດີຈາກການທໍລະຍົດນີ້ ເພາະວ່າບໍ່ດົນເພິ່ນເອງກໍຖືກຈັບຂັງຢູ່ໃນບ່ອນດຽວກັນ.[7] ມີການພິສູດວ່າສັນຕະປາປາຈອນມີຄວາມຜິດໃນອາດຊະຍາກຳທີ່ຕ່ຳຊ້າທີ່ສຸດ. ນອກຈາກການຂ້າຄົນ, ການລ່ວງປະເວນີ, ການນຳໃຊ້ສາສະໜາເປັນເຄື່ອງມືຫາກິນ ກໍຍັງເຮັດ “ຄວາມບາບທີ່ຮ້າຍແຮງຈົນບໍ່ສົມຄວນເວົ້າອອກມາ.” ອັນນີ້ແມ່ນຂໍ້ສະຫຼຸບຂອງສະພາເອງ, ສຸດທ້າຍມີການປົດເອົາມົງກຸດສາມຊັ້ນອອກຈາກຫົວຂອງເພິ່ນ ແລະ ຈັບເພິ່ນຂັງຄຸກ. ສ່ວນອີກສອງຄົນທີ່ອ້າງວ່າຕົນເປັນສັນຕະປາປານັ້ນ ກໍຖືກປົດລົງດ້ວຍ ແລະ ມີການເລືອກສັນຕະປາປາອົງໃໝ່. *{GC 106.2}*

ຈອນ ຣັສ ເຄີຍກ່າວຫາພວກບາດຫຼວງ ແລະ ເຄີຍຮຽກຮ້ອງໃຫ້ມີການປະຕິຮູບໃນເລື່ອງທີ່ເພິ່ນກ່າວຫານັ້ນ ແຕ່ສັນຕະປາປາມີຄວາມຜິດທີ່ຮ້າຍແຮງກວ່ານັ້ນຫຼາຍ; ເຖິງຢ່າງນັ້ນກໍຕາມ, ສະພາດຽວກັນທີ່ປົດສັນຕະປາປາລົງ ກໍໄດ້ໜັນໄປດຳເນີນການທຳລາຍຣັສດ້ວຍ. ການທີ່ເພິ່ນຖືກຄຸມຂັງເຮັດໃຫ້ປະຊາຊົນຊາວໂบฮีเมยลุ่มเຄືองเดือดดาน. ຂຸນນางที่มีอำนาดหลายคนได้ยื่นหนังสือประท้วงอย่างจริงจังต่อที่ประชุมสะพาเพื่อต่อต้านเลื่องที่บ่เป็นท่านี้. ส่วนจักกะพัดเองกอ็ต่อต้านการดำเนิน

[6] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 1, ໜ້າ 148, 149.

[7] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 1, ໜ້າ 247.

ການກັບຮັສ ເພາະບໍ່ຢາກລະເມີດໃບຮັບຮອງຄວາມປອດໄພ; ແຕ່ພວກສັດຕູຂອງຮັສມີໃຈຫ້ຽມໂຫດ ຈຶ່ງໝາຍໝັ້ນປັ້ນມືວ່າ ຈະຕ້ອງທຳລາຍເພິ່ນໃຫ້ໄດ້. ພວກເຂົາຮຽກຮ້ອງໃຫ້ ຈັກກະພັດເຫັນດ້ວຍກັບ ພວກເຂົາ ໂດຍອາໄສອະຄະຕິ ແລະ ຄວາມຢ້ານກົວຂອງເພິ່ນ ພ້ອມດ້ວຍຄວາມກະຕືລືລົ້ນທີ່ ເພິ່ນມີໃນການສະໜັບສະໜູນຄຣິສຕະຈັກໂຣມ. ພວກເຂົາຍົກເຫດຜົນມາຫຼາຍຕໍ່ຫຼາຍຂໍ້ເພື່ອພິສູດ ວ່າ: “ບໍ່ຄວນຊື່ສັດຕໍ່ຄົນນອກຮີດ ຫຼື ຄົນທີ່ສົງໄສວ່າເປັນຄົນນອກຮີດ ບໍ່ວ່າຄົນນັ້ນຈະມີໃບຮັບຮອງ ຄວາມປອດໄພຈາກຈັກກະພັດ ຫຼື ຈາກກະສັດອົງໃດກໍຕາມ.”[8] ພວກເຂົາຈຶ່ງໂນ້ມນ້າວຈັກກະພັດໄດ້ ສຳເລັດ. *{GC 107.1}*

ຫ້ອງໃຕ້ດິນທີ່ຮັສຖືກຂັງຢູ່ນັ້ນຊຸ່ມປຽກ ແລະ ອາກາດເສຍບໍ່ຖ່າຍເທ, ເຮັດໃຫ້ເພິ່ນປ່ວຍໄຂ້ຈົນ ເກືອບຈົບຊີວິດລົງ, ແຕ່ໃນທີ່ສຸດເພິ່ນໄດ້ຖືກນຳພາອອກມາຕໍ່ໜ້າທີ່ປະຊຸມສະພາ ແລະ ຢືນຢູ່ຕໍ່ໜ້າ ຈັກກະພັດໃນສະພາບທີ່ຖືກມັດໂສ້ຢູ່ ກໍຄືຈັກກະພັດອົງດຽວກັນທີ່ໄດ້ຢືນຢັນຮັບຮອງຄວາມປອດໄພຂອງ ເພິ່ນ. ຕະຫຼອດເວລາຂອງການພິຈາລະນາຄະດີຢ່າງຊ້ານານນັ້ນ ຮັສຢືນຢັດ ແລະ ຢຶດໝັ້ນເພື່ອຄວາມ ຈິງ ທັງໄດ້ປະທ້ວງຄວາມເສື່ອມຊາມຂອງພວກຜູ້ນຳຄຣິສຕະຈັກດ້ວຍຄວາມໜັກແໜ້ນ ແລະ ຄວາມ ສັດຊື່ຕໍ່ໜ້າບັນດາເຈົ້າໜ້າທີ່ຂອງຄຣິສຕະຈັກ ແລະ ເຈົ້າໜ້າທີ່ບ້ານເມືອງທີ່ປະຊຸມກັນຢູ່ນັ້ນ. ເມື່ອຖືກ ບັງຄັບໃຫ້ຕ້ອງເລືອກລະຫວ່າງການປະຕິເສດຫຼັກຄຳສອນຂອງເພິ່ນກັບຄວາມຕາຍ ເພິ່ນເລືອກທີ່ຈະຖືກ ປະຫານຊີວິດຍ້ອນຄວາມເຊື່ອ. *{GC 107.2}*

ພຣະຄຸນຂອງພຣະເຈົ້າເສີມກຳລັງໃຫ້ເພິ່ນ. ຕະຫຼອດໄລຍະເວລາຫຼາຍອາທິດທີ່ຕ້ອງທົນກັບຄວາມ ທຸກທໍລະມານກ່ອນທີ່ຈະປະກາດຜົນການຕັດສິນຄະດີນັ້ນ ຮັສມີສັນຕິສຸກຈາກສະຫວັນເຕັມລົ້ນຢູ່ໃນ ຫົວໃຈຂອງເພິ່ນ. ເພິ່ນຂຽນເຖິງໝູ່ເພື່ອນຄົນໜຶ່ງວ່າ: “ເຮົາຂຽນຈົດໝາຍສະບັບນີ້ຈາກຫ້ອງຂັງດ້ວຍ ມືທີ່ຖືກມັດໂສ້ ໂດຍຄາດວ່າ ມື້ອື່ນສະພາຈະປະກາດຄຳຕັດສິນປະຫານຊີວິດເຮົາ, . . . ແຕ່ດ້ວຍການ ອຸປະຖຳຄ້ຳຊູຂອງອົງພຣະເຢຊູຄຣິສ ພວກເຮົາຈະໄດ້ພົບກັນອີກໃນຊີວິດໜ້າດ້ວຍສັນຕິສຸກທີ່ແສນ ຍິນດີ, ເຈົ້າຈະໄດ້ຮັບຮູ້ວ່າ ພຣະເຈົ້າຊົງເມດຕາຕໍ່ເຮົາຫຼາຍສ່ຳໃດ ແລະ ຊົງຄ້ຳຈູນເຮົາທ່າມກາງ ຄວາມທຸກຍາກລຳບາກ ແລະ ການທົດລອງ.”[9] *{GC 107.3}*

ຈາກຫ້ອງຂັງທີ່ມືດມິດນັ້ນ ຮັສເຫັນເຖິງໄຊຊະນະຂອງຄວາມເຊື່ອທີ່ແທ້ຈິງ. ເພິ່ນໄດ້ຝັນເຫັນໂບດທີ່ ເມືອງປຣັກທີ່ເພິ່ນເຄີຍເທດສະໜາປະກາດຂ່າວປະເສີດ. ໃນຄວາມຝັນນັ້ນ, ເພິ່ນເຫັນສັນຕະປາປາກັບ ພວກເຈົ້າຄະນະກຳລັງລຶບຮູບຂອງພຣະຄຣິສທີ່ເພິ່ນເຄີຍໃຫ້ຄົນແຕ້ມໄວ້ຢູ່ຝາຜະໜັງຂອງໂບດ. “ນິມິດນີ້ ເຮັດໃຫ້ໃຈເພິ່ນເປັນທຸກ, ແຕ່ວັນຕໍ່ມາເພິ່ນຝັນເຫັນວ່າ ມີນັກແຕ້ມສີຫຼາຍຄົນກຳລັງສ້ອມແປງຮູບເຫຼົ່ານັ້ນໃນ ຈຳນວນທີ່ຫຼາຍກວ່າເດີມ ແລະ ດ້ວຍສີທີ່ສົດໃສກວ່າເດີມ. ພໍແຕ້ມແຕ່ງແລ້ວ ພວກສິລະປິນກັນໄປເວົ້າກັບ ຄົນຈຳນວນມະຫາສານທີ່ຢືນລ້ອມຢູ່ນັ້ນວ່າ: ‘ເອົາເຖາະ! ບັດນີ້ໃຫ້ພວກສັນຕະປາປາ ແລະ ພວກເຈົ້າ ຄະນະມາໂລດ ພວກເຂົາຈະບໍ່ມີວັນລຶບລ້າງຮູບເຫຼົ່ານີ້ໄດ້ອີກເລີຍ!’” ໃນຂະນະທີ່ຮັສເວົ້າຄວາມຝັນ ໃຫ້ຄົນອື່ນຟັງ ເພິ່ນກ່າວວ່າ, “ຂ້າພະເຈົ້າໝັ້ນໃຈວ່າ ພຣະລັກສະນະຂອງພຣະຄຣິສຈະບໍ່ມີວັນຖືກ ລຶບລ້າງ. ເຖິງແມ່ນວ່າມີຄົນຢາກທຳລາຍ ແຕ່ພຣະລັກສະນະນັ້ນຈະຖືກແຕ້ມໃໝ່ໃນໃຈທຸກຄົນດ້ວຍ ນັກເທດທີ່ດີກວ່າຂ້າພະເຈົ້າ.”[10] *{GC 108.1}*

---

[8] ຈັກ ລອງຟອງ (Jacques Lenfant), *ປະຫວັດສະພາຄຣິສຕະຈັກແຫ່ງເມືອງຄອນສະຕັນ*, ເຫຼັ້ມ 1, ໜ້າ 516.

[9] ບອນໂຊດ, ເຫຼັ້ມ 2, ໜ້າ 67.

[10] ໂດບິນເຍ (D’Aubigné), ເຫຼັ້ມ 1, ບົດ. 6.

ຕໍ່ໜ້າສະພາເປັນຄັ້ງສຸດທ້າຍ

ແລະແລ້ວຮັສກໍຖືກນຳພາໄປຢູ່ຕໍ່ໜ້າປະຊຸມສະພາເປັນຄັ້ງສຸດທ້າຍ. ຄົນໃນທີ່ປະຊຸມມີຈຳນວນມະຫາສານ ຕ່າງຄົນຕ່າງແຕ່ງກາຍຢ່າງສວຍສົດງົດງາມ ມີທັງອົງຈັກກະພັດ, ບັນດາເຈົ້າແຂວງຈາກທົ່ວອານາຈັກ, ຄະນະຜູ້ແທນຂອງບັນດາກະສັດ, ພວກພຣະຄາດີນັນ, ເຈົ້າຄະນະ, ບາດຫຼວງນ້ອຍໃຫຍ່ ແລະ ປະຊາຊົນຈຳນວນຫຼວງຫຼາຍທີ່ມາເບິ່ງເຫດການໃນວັນນັ້ນ. ມີຄົນຈາກທົ່ວທຸກປະເທດທີ່ມີການນັບຖືສາສະໜາຄຣິສມາເປັນພະຍານໃນການສະຫຼະຊີວິດຄັ້ງທຳອິດນີ້ ໃນລະຫວ່າງການຕໍ່ສູ້ອັນດຸເດືອດເພື່ອໃຫ້ໄດ້ມາເຊິ່ງເສລີພາບທາງຈິດສຳນຶກ. *{GC 108.2}*

ເມື່ອຮັສໄດ້ຮັບຄຳສັ່ງໃຫ້ຢືນຢັນຄຳຕອບສຸດທ້າຍ, ເພິ່ນປະຕິເສດບໍ່ຍອມປະຖິ້ມຄວາມເຊື່ອ. ແລ້ວເພິ່ນຈ້ອງໜ້າຈັກກະພັດທີ່ໄດ້ທໍລະຍົດຕໍ່ຄຳໝັ້ນສັນຍານັ້ນ ແລະ ກ່າວວ່າ, “ຂ້າພະເຈົ້າສະໝັກໃຈມາລາຍງານຕໍ່ໜ້າສະພາແຫ່ງນີ້ ໂດຍມີໃບຮັບຮອງຄວາມປອດໄພຈາກອົງຈັກກະພັດຜູ້ທີ່ນັ່ງຢູ່ໃນທີ່ປະຊຸມນີ້.”[11] ໃບໜ້າຂອງຈັກກະພັດຊີກີມົງແດງກ່ຳ ໃນຂະນະທີ່ທຸກຄົນຫັນໄປເບິ່ງ. *{GC 108.3}*

ຫຼັງຈາກປະກາດຄຳຕັດສິນແລ້ວ ພິທີຖອດຍົດກໍເລີ່ມຂຶ້ນ. ພວກເຈົ້າຄະນະໃຫ້ຮັສໃສ່ຊຸດບາດຫຼວງ, ແລ້ວເພິ່ນກໍກ່າວວ່າ: “ເມື່ອກະສັດເຮໂຣດສັ່ງໃຫ້ນຳພຣະເຢຊູຄຣິສອົງພຣະຜູ້ເປັນເຈົ້າຂອງເຮົາກັບໄປຫາປີລາດ ພຣະອົງຖືກໝິ່ນປະໝາດໂດຍທີ່ພຣະອົງຕ້ອງໃສ່ຊຸດຂາວ.”[12] ມີເຈົ້າໜ້າທີ່ສັ່ງອີກໃຫ້ຮັສຖອນຄຳສອນຄືນ, ແຕ່ເພິ່ນຫັນໄປເບິ່ງປະຊາຊົນ ແລະ ຕອບວ່າ, “ຖ້າເຮັດຢ່າງນັ້ນແລ້ວ ຂ້າພະເຈົ້າຈະເອົາໜ້າມາແຕ່ໃສແທ້ງນຂຶ້ນໄປຫາສະຫວັນ? ຂ້າພະເຈົ້າເຄີຍປະກາດຂ່າວປະເສີດອັນບໍຣິສຸດແກ່ຄົນຈຳນວນຫຼວງຫຼາຍ, ຖ້າຖອນຄຳສອນແລ້ວ ຈະສູ້ໜ້າຄົນເຫຼົ່ານັ້ນໄດ້ຢ່າງໃດ? ຢ່າໃຫ້ເປັນເຊັ່ນນັ້ນເລີຍ. ຂ້າພະເຈົ້າຖືວ່າຄວາມລອດພົ້ນຂອງຄົນເຫຼົ່ານີ້ ສຳຄັນກວ່າຮ່າງກາຍທີ່ໜ້າເວດທະນາຂອງຂ້າພະເຈົ້າ ເຊິ່ງດຽວນີ້ຖືກກຳນົດໃຫ້ຕ້ອງຕາຍ.” ຈາກນັ້ນມີຄົນຖອດຊຸດປະຈຳຕຳແໜ່ງອອກຈາກຮັສເທື່ອລະຊິ້ນ, ໃນຂະນະທີ່ຖອດອອກແຕ່ລະຊິ້ນນັ້ນ ມີເຈົ້າຄະນະຜັດວຽນສາບແຊ່ງເພິ່ນ. ໃນທີ່ສຸດ “ພວກເຂົາເອົາໝວກກະດາດຮູບຊົ່ງຈວຍສວມໃສ່ຫົວຂອງເພິ່ນ. ໝວກນັ້ນມີຮູບຜີປີສາດທີ່ເປັນຕາຢ້ານ ແລະ ມີຖ້ອຍຄຳຂຽນດ້ວຍອັກສອນໃຫຍ່ໄວ້ດ້ານໜ້າວ່າ ‘ຈອມນອກຮີດ.’ ສ່ວນຮັສກໍກ່າວວ່າ, ‘ໂອພຣະເຢຊູເຈົ້າ ຂ້ານ້ອຍມີຄວາມຍິນດີຫຼາຍທີ່ໄດ້ໃສ່ມົງກຸດອັນໜ້າອັບອາຍນີ້ເພື່ອພຣະອົງ, ເພາະພຣະອົງຊົງໃສ່ມົງກຸດໜາມເພື່ອຂ້ານ້ອຍ.’” *{GC 108.4}*

ເມື່ອຮັສຖືກແຕ່ງກາຍຢຽບຮ້ອຍແລ້ວ “ຝ່າຍພວກຜູ້ນຳຄຣິສຕະຈັກໂຣມກ່າວວ່າ, ‘ບັດນີ້ພວກເຮົາຂໍມອບຈິດວິນຍານຂອງເຈົ້າໃຫ້ພະຍາມານສາ.’ ແລ້ວຈອນ ຮັສກໍເງີຍໜ້າຂຶ້ນຫາຟ້າສະຫວັນ ແລະ ກ່າວວ່າ, ‘ຂ້ານ້ອຍຂໍມອບວິນຍານຈິດໄວ້ໃນພຣະຫັດຂອງພຣະເຢຊູເຈົ້າ ເພາະພຣະອົງຊົງໄຖ່ຂ້ານ້ອຍແລ້ວ.’”[13] *{GC 109.1}*

ຖືກຂ້າຕາຍຍ້ອນຄວາມເຊື່ອ

ຈາກນັ້ນຮັສຖືກມອບໄວ້ໃນມືຂອງເຈົ້າໜ້າທີ່ຝ່າຍປົກຄອງ ແລະ ພວກເຂົາກໍນຳເພິ່ນໄປຍັງແດນປະຫານ. ຄົນທີ່ແຫ່ກັນໄປນັ້ນມີຈຳນວນຫຼວງຫຼາຍ, ມີຄົນຖືອາວຸດຫຼາຍຮ້ອຍຄົນ, ພວກບາດຫຼວງ ແລະ ເຈົ້າຄະນະນຸ່ງເຄື່ອງລາຄາແພງ ພ້ອມທັງຊາວເມືອງຄອນສະຕັນ. ເມື່ອຮັສຖືກມັດໄວ້ກັບຫຼັກປະຫານ ແລະ ກ່ອນທີ່ຈະຈູດໄຟນັ້ນ ມີຄົນຂໍຮ້ອງເພິ່ນໃຫ້ຊ່ວຍຕົວເອງໃຫ້ພົ້ນ ດ້ວຍການປະກາດ

[11] ບອນໂຊດ, ເຫຼັ້ມ 2, ໜ້າ 84.
[12] ບອນໂຊດ, ເຫຼັ້ມ 2, ໜ້າ 86.
[13] ໄວລີ, ເຫຼັ້ມ 3, ບົດ 7.

ວ່າສິ່ງທີ່ເພິ່ນສອນນັ້ນບໍ່ໄດ້ເປັນຄວາມຈິງ. ຮັສຕອບວ່າ, “ມີເລື່ອງໃດແດ່ທີ່ບໍ່ຈິງ? ຂ້າພະເຈົ້າບໍ່ຮູ້ວ່າມີ ຄຳສອນອັນໃດຂອງຂ້າພະເຈົ້າທີ່ເປັນຄວາມເທັດ. ຂໍໃຫ້ພຣະເຈົ້າຊົງເປັນພະຍານວ່າ ທຸກສິ່ງທຸກຢ່າງທີ່ ຂ້າພະເຈົ້າໄດ້ຂຽນໄວ້ ແລະ ໄດ້ເທດສະໜາປະກາດນັ້ນ ລ້ວນແຕ່ເຮັດໄປໂດຍມີເປົ້າປະສົງເພື່ອຊ່ວຍ ຄົນໃຫ້ລອດພົ້ນຈາກຄວາມບາບ ແລະ ຄວາມພິນາດ. ສະນັ້ນ, ຂ້າພະເຈົ້າຍິນດີຫຼາຍທີ່ຈະຢືນຢັນ ເຖິງຄວາມຈິງທີ່ຂ້າພະເຈົ້າໄດ້ຂຽນ ແລະ ປະກາດນັ້ນດ້ວຍເລືອດຂອງຂ້າພະເຈົ້າເອງ.”[14] ພໍແປວໄຟ ລຸກຢູ່ຮອບຕົວເພິ່ນ, ຮັສເລີ່ມຮ້ອງເພງວ່າ, “ພຣະເຢຊູບຸດຂອງດາວິດເຈົ້າຂາ, ຂໍຊົງເມດຕາຂ້ານ້ອຍ ແດ່ທ້ອນ.” ເພິ່ນຍັງຄົງຮ້ອງເພງເຊັ່ນນີ້ຈົນກວ່າສຽງຂອງເພິ່ນມິດງຽບໄປຕະຫຼອດການ. *{GC 109.2}*

ແມ່ນແຕ່ພວກສັດຕູກໍຮູ້ສຶກປະທັບໃຈກັບຄວາມກ້າຫານຂອງເພິ່ນ. ມີຄົນທີ່ສະໜັບສະໜູນສັນຕະ-ປາປາຢ່າງກະຕືລືລົ້ນຄົນໜຶ່ງບັນລະຍາຍເຖິງການສະຫຼະຊີວິດເພື່ອຄວາມເຊື່ອຂອງຮັສ ແລະ ເຈໂຣມທີ່ ເສຍຊີວິດຫຼັງຈາກຮັສບໍ່ດົນວ່າ “ທັງສອງຄົນຮັກສາສະຕິເມື່ອເຂົ້າໃກ້ນາທີແຫ່ງຄວາມຕາຍ. ພວກເຂົາ ກຽມຕົວສຳລັບໄຟປະຫານເໝືອນກຳລັງກຽມຕົວໄປກິນລ້ຽງໃນງານດອງ ແລະ ບໍ່ໄດ້ຮ້ອງໂອດໂອຍຍ້ອນ ຄວາມເຈັບປວດ. ເມື່ອແປວໄຟລຸກໄໝ້ຢູ່ ພວກເຂົາເລີ່ມຮ້ອງເພງສັນລະເສີນພຣະເຈົ້າ ແລະ ຍັງຄົງຮ້ອງ ຢູ່ທ່າມກາງຄວາມຮ້ອນແຮງຂອງໄຟນັ້ນ.”[15] *{GC 109.3}*

ເມື່ອຮ່າງກາຍຂອງຮັສຖືກເຜົາໄໝ້ຈົນໝົດ ຝຸ່ນກະດູກຂອງເພິ່ນພ້ອມດ້ວຍດິນທີ່ຮອງຮັບເອົາເທົ້າຖ່ານ ນັ້ນຖືກຮວບຮວມໄວ້ ແລະ ຖືກໂຍນເຂົ້າໄປໃນແມ່ນ້ຳໄຮນ໌ ແລະ ຖືກພັດພາອອກໄປສູ່ມະຫາສະໝຸດ. ຄົນ ທັງຫຼາຍທີ່ກົດຂີ່ຂົ່ມເຫັງຮັສຄິດວ່າ ພວກເຂົາໄດ້ຖອນຮາກເຫງົ້າຂອງຄວາມຈິງທີ່ເພິ່ນສອນອອກຈົນ ໝົດ, ແຕ່ກໍບໍ່ໄດ້ເປັນຢ່າງນັ້ນ. ພວກເຂົາບໍ່ຄາດຝັນວ່າ ຝຸ່ນກະດູກທີ່ຖືກພັດພາລົງທະເລໃນມື້ ນັ້ນ ປຽບສະເໝືອນຄຳສອນຂອງເພິ່ນ ທີ່ເປັນດັ່ງເມັດພືດທີ່ຖືກຫວ່ານອອກໄປຍັງປະເທດທັງຫຼາຍ ໃນໂລກ ເຊິ່ງງອກຂຶ້ນໃນດິນແດນທີ່ຍັງບໍ່ໄດ້ຄົ້ນພົບ ໃຫ້ເກີດຜົນຢ່າງອຸດົມສົມບູນ ກໍຄືຄົນຈຳນວນ ຫຼວງຫຼາຍທີ່ຈະເປັນພະຍານຝ່າຍຄວາມຈິງນັ້ນເອງ. ສຽງທີ່ກ່າວໄວ້ໃນສະພາແຫ່ງເມືອງຄອນສະຕັນ ໄດ້ ກ້ອງກັງວານໄປໃນທຸກຍຸກທຸກສະໄໝສືບເນື່ອງກັນມາ. ຮັສບໍ່ຢູ່ແລ້ວ, ແຕ່ຄວາມຈິງທີ່ເພິ່ນປະກາດ ດ້ວຍການສະຫຼະຊີວິດນັ້ນ ຈະບໍ່ມີວັນດັບສູນ. ແບບຢ່າງຄວາມເຊື່ອ ແລະ ຄວາມຈົງຮັກພັກດີຂອງ ເພິ່ນເປັນກຳລັງໃຈໃຫ້ຄົນຈຳນວນຫຼວງຫຼາຍຢືນຢັດຢູ່ຝ່າຍຄວາມຈິງ ໃນຂະນະທີ່ຕ້ອງປະເຊີນໜ້າກັບ ການຖືກທໍລະມານ ແລະ ຄວາມຕາຍ. ການປະຫານຊີວິດຮັສນັ້ນ ໄດ້ສະແດງໃຫ້ຄົນທັງໂລກຮູ້ເຖິງ ຄວາມໂຫດຫ້ຽມທາລຸນຂອງຄຣິສຕະຈັກໂຣມ. ສັດຕູຂອງຄວາມຈິງບໍ່ຄາດຄິດເລີຍວ່າ ພວກເຂົາກຳລັງ ສະໜັບສະໜູນອຸດົມການທີ່ຕົນເອງພະຍາຍາມທຳລາຍແຕ່ທຳລາຍບໍ່ສຳເລັດ. *{GC 110.1}*

ເຈໂຣມພ່າຍແພ້ຕໍ່ການທົດລອງ

ແລ້ວຍັງມີຫຼັກປະຫານອີກຕົ້ນໜຶ່ງຖືກປັກໄວ້ທີ່ເມືອງຄອນສະຕັນ. ເລືອດຂອງອີກຄົນໜຶ່ງຈະຕ້ອງ ຫຼັ່ງໄຫຼເພື່ອເປັນພະຍານຝ່າຍຄວາມຈິງ. ຕອນທີ່ຮັສອອກເດີນທາງໄປເພື່ອລາຍງານຕົວຕໍ່ໜ້າສະພານັ້ນ ເຈໂຣມໄດ້ອຳລາຮັສ ໂດຍແນະນຳໃຫ້ເພິ່ນຢຶດໝັ້ນດ້ວຍຄວາມກ້າຫານ ແລະ ກ່າວວ່າ ຖ້າຮັສຕົກຢູ່ໃນ ອັນຕະລາຍ ຕົນຈະແລ່ນໄປຊ່ວຍ. ພໍໄດ້ຍິນວ່າຮັສຖືກຂັງຄຸກ, ເຈໂຣມຜູ້ເປັນລູກສິດທີ່ສັດຊື່ ໄດ້ອອກ ເດີນທາງໄປເມືອງຄອນສະຕັນທັນທີ ພ້ອມກັບອີກຄົນໜຶ່ງ ເພື່ອຮັກສາຄຳທີ່ສັນຍາໄວ້, ແຕ່ເຈໂຣມບໍ່ ມີໃບຮັບຮອງຄວາມປອດໄພ. ເມື່ອໄປເຖິງເມືອງ ເພິ່ນເຫັນວ່າຕົນເອງກໍຕົກຢູ່ໃນອັນຕະລາຍ ແລະ ບໍ່

[14] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 3, ບົດ 7.
[15] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 3, ບົດ 7.

ສາມາດເຮັດຫຍັງໄດ້ເພື່ອປົດປ່ອຍຣັສ. ເພິ່ນຈຶ່ງໜີອອກຈາກເມືອງ ແຕ່ຖືກຈັບກຸມໃນຂະນະທີ່ເດີນທາງກັບບ້ານ. ເພິ່ນຖືກມັດໂສ້ ແລະ ຖືກທະຫານກຸ່ມໜຶ່ງນຳພາເພິ່ນກັບເຂົ້າເມືອງ. ຄັ້ງທຳອິດທີ່ເພິ່ນຖືກນຳໄປຕໍ່ໜ້າສະພານັ້ນ ເມື່ອເພິ່ນພະຍາຍາມຕອບຂໍ້ກ່າວຫາ ມີຄົນຮ້ອງຕະໂກນກົບສຽງຂອງເພິ່ນວ່າ, “ເຜົ່າມັນໃຫ້ຕາຍ! ເຜົ່າມັນໃຫ້ຕາຍເສຍ!”[16] ເພິ່ນຖືກຂັງໄວ້ໃນຄຸກໃຕ້ດິນ, ຖືກມັດໂສ້ໃນທ່ານັ່ງທີ່ທໍລະມານຫຼາຍ ແລະ ມີແຕ່ເຂົ້າຈີ່ກັບນ້ຳໃຫ້ກິນເທົ່ານັ້ນ. ຫຼັງຈາກຖືກຂັງຢ່າງທໍລະມານຫຼາຍເດືອນ ເຈໂຣມເຈັບປ່ວຍໃກ້ຕາຍ. ຝ່າຍພວກສັດຕູຢ້ານວ່າເພິ່ນຈະຫຼຸດມືພວກເຂົາໄປໄດ້ ຈຶ່ງເບົາມືລົງລະດັບໜຶ່ງ ແຕ່ຍັງຂັງເພິ່ນຕໍ່ໄປໃຫ້ຄົບປີ. *{GC 110.2}*

ຄວາມຕາຍຂອງຣັສບໍ່ໄດ້ຜົນຕາມຄວາມຄາດຫວັງຂອງພວກທີ່ສະໜັບສະໜູນສັນຕະປາປາ. ການທີ່ພວກເຂົາລະເມີດໃບຮັບຮອງຄວາມປອດໄພນັ້ນ ເຮັດໃຫ້ປະຊາຊົນເກີດຄວາມໂກດຮ້າຍ ເໝືອນພະຍຸຮ້າຍໄດ້ກໍ່ຕົວຂຶ້ນ. ສະນັ້ນ, ສະພາຈຶ່ງມຸ່ງໝັ້ນທີ່ຈະໃຫ້ເຈໂຣມຖອນຄຳສອນຖ້າເປັນໄປໄດ້ ເພາະຈະເປັນຫົນທາງທີ່ປອດໄພກວ່າການປະຫານຊີວິດເພິ່ນດ້ວຍການເຜົາໄຟ. ເຈໂຣມຖືກນຳພາໄປຕໍ່ໜ້າປະຊຸມສະພາ ແລະ ຖືກສັ່ງໃຫ້ເລືອກລະຫວ່າງການປະຕິເສດຄວາມເຊື່ອ ກັບການຖືກປະຫານດ້ວຍການເຜົາໄຟ. ຖ້າຫາກວ່າເພິ່ນມີໂອກາດເລືອກຄວາມຕາຍເມື່ອເລີ່ມຕົ້ນການຖືກຄຸມຂັງນັ້ນ ກໍຄົງຖືວ່າເປັນຄວາມເມດຕາ ເມື່ອປຽບທຽບກັບຄວາມທຸກທໍລະມານຢ່າງແສນສາຫັດທີ່ຜ່ານມາ. ແຕ່ບັດນີ້ ມີຫຼາຍສິ່ງຫຼາຍຢ່າງທີ່ບັນທອນທັງກຳລັງກາຍ ແລະ ໃຈຂອງເພິ່ນເຊັ່ນ: ຄວາມປ່ວຍໄຂ້, ສະພາບທີ່ໂຫດຮ້າຍຂອງຫ້ອງຂັງ, ການແບກທຸກທີ່ບໍ່ຮູ້ວ່າຈະເກີດຫຍັງຂຶ້ນ, ການຖືກຕັດຂາດໄປຈາກໝູ່ນ້ອງ ແລະ ຄວາມທໍ້ຖອຍທີ່ຕາມມາຈາກການເສຍຊີວິດຂອງຣັສ. ເຈໂຣມຈຶ່ງໝົດຄວາມອົດທົນ ແລະ ຍອມເຮັດຕາມຄຳສັ່ງຂອງສະພາ. ເພິ່ນປະຕິຍານຕົນວ່າ ຈະຍຶດຖືຄຳສອນຂອງຄຣິສຕະຈັກໂຣມັນກາໂຕລິກ ແລະ ຈະຍອມຮັບມະຕິຂອງສະພາທີ່ກ່າວໂທດຄຳສອນຂອງ ທ່ານ ໄວຄລິບ ແລະ ຈອນ ຮັສ ຍົກເວັ້ນ “ຫຼັກຄວາມຈິງອັນບໍຣິສຸດ” ທີ່ພວກເຂົາສອນ.[17] *{GC 111.1}*

ເຈໂຣມເລືອກທາງງ່າຍ ໂດຍຫວັງວ່າຈະຊ່ວຍດັບສຽງຈິດສຳນຶກຜິດຊອບ ແລະ ໃຫ້ເພິ່ນພົ້ນຄວາມຕາຍ. ແຕ່ເມື່ອກັບໄປຢູ່ຄົນດຽວໃນຫ້ອງຂັງ ເພິ່ນສາມາດເຫັນຢ່າງແຈ່ມແຈ້ງຂຶ້ນວ່າຕົນໄດ້ເຮັດສິ່ງໃດລົງໄປ ໂດຍປຽບທຽບຄວາມກ້າຫານ ແລະ ຄວາມສັດຊື່ຂອງຣັສ ກັບຕົນເອງທີ່ປະຕິເສດຄວາມຈິງ; ເຈໂຣມຍັງຄິດເຖິງພຣະເຢຊູຄຣິສຜູ້ຊົງເປັນພຣະອາຈານຂອງເພິ່ນ ທີ່ເພິ່ນໄດ້ປະຕິຍານຕົນວ່າຈະຮັບໃຊ້ພຣະອົງ, ພຣະອົງຍອມສິ້ນພຣະຊົນເທິງໄມ້ກາງແຂນເພື່ອເພິ່ນ. ກ່ອນທີ່ຈະປະຕິເສດຄວາມເຊື່ອ ເຈໂຣມເຄີຍໄດ້ຮັບກຳລັງໃຈທ່າມກາງຄວາມທຸກຕ່າງໆ ທີ່ເກີດຂຶ້ນ ເພາະຮູ້ວ່າກຳລັງເຮັດໃນສິ່ງທີ່ພຣະເຈົ້າພໍພຣະໄທ. ມາບັດນີ້, ມີແຕ່ຄວາມເສຍໃຈ ແລະ ຄວາມສົງໄສທີ່ທໍລະມານຈິດໃຈຂອງເພິ່ນຢູ່. ເພິ່ນຮູ້ວ່າຍັງຈະຕ້ອງມີການຖອນຄຳສອນອີກ, ຈະຕ້ອງມີການປະຕິເສດຄວາມເຊື່ອອີກ ກ່ອນທີ່ຄຣິສຕະຈັກໂຣມຈະຍອມໃຫ້ເພິ່ນຢູ່ຢ່າງສະຫງົບສັນຕິ. ຫົນທາງທີ່ເພິ່ນກ້າວລົງໄປເດີນຢູ່ນັ້ນ ຈະຈົບລົງດ້ວຍການທີ່ເພິ່ນຕ້ອງປະຕິເສດຄວາມຈິງຢ່າງສິ້ນເຊີງ. ເຈໂຣມຈຶ່ງຕັດສິນໃຈຢ່າງເດັດດ່ຽວແນ່ວແນ່ວ່າ ຈະບໍ່ປະຕິເສດອົງພຣະຜູ້ເປັນເຈົ້າຂອງຕົນເພື່ອພົ້ນຄວາມທຸກໃນໄລຍະເວລາສັ້ນ. *{GC 111.2}*

ຖອນຄືນຄຳປະຕິເສດ

ໃນບໍ່ຊ້າເຈໂຣມຖືກນຳໄປຕໍ່ໜ້າປະຊຸມສະພາ. ຄະນະຜູ້ພິພາກສາບໍ່ພໍໃຈກັບການຍິນຍອມຂອງເພິ່ນ. ການຕາຍຂອງຣັສໄດ້ປຸກໃຫ້ພວກເຂົາມີຄວາມກະຫາຍເລືອດ, ພວກເຂົາຈຶ່ງຕ້ອງການເຫຍື່ອຄົນ

[16] ບອນໂຊດ, ເຫຼັ້ມ 1, ໜ້າ 234.

[17] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 2, ໜ້າ 141.

ໃໝ່. ການຍອມປະຕິເສດຄວາມຈິງຢ່າງສິ້ນເຊີງໂດຍບໍ່ມີເງື່ອນໄຂ ເປັນວິທີດຽວທີ່ເຈໂຣມຈະຮັກສາຊີວິດເອົາໄວ້ໄດ້. ແຕ່ເຈໂຣມຕັ້ງໃຈທີ່ຈະຢືນຢັດເຖິງຄວາມເຊື່ອຂອງເພິ່ນ ໂດຍການຍອມໃຫ້ຖືກປະຫານດ້ວຍການເຜົາໄຟ ເໝືອນຮັສຜູ້ເປັນພີ່ນ້ອງທາງຄວາມເຊື່ອ. {GC 112.1}

ເຈໂຣມປະຕິເສດຄຳປະຕິເສດຂອງເພິ່ນເອງ ແລະ ຖອນຄືນຄຳຖອນຄືນຂອງຕົນ. ແລ້ວໃນຖານະຄົນໃກ້ຕາຍ ເພິ່ນຂໍຮ້ອງໃຫ້ມີໂອກາດກ່າວປົກປ້ອງຕົນເອງ. ພວກຜູ້ນຳຄຣິສຕະຈັກຢ້ານຜົນຂອງຄຳເວົ້າຂອງເພິ່ນ ຈຶ່ງຮຽກຮ້ອງໃຫ້ເພິ່ນພຽງແຕ່ຕອບວ່າ ຂໍ້ກ່າວຫາທີ່ຟ້ອງເພິ່ນນັ້ນແມ່ນຄວາມຈິງ ຫຼື ບໍ່. ເຈໂຣມທັກທ້ວງວ່າ ການຮຽກຮ້ອງນັ້ນໂຫດຮ້າຍເກີນໄປ ແລະ ບໍ່ເປັນທຳ ໂດຍກ່າວວ່າ, “ພວກທ່ານໄດ້ຂັງຂ້າພະເຈົ້າ 340 ວັນໃນຫ້ອງຂັງທີ່ເປັນຕາຢ້ານແທ້, ທ່າມກາງຂອງເສຍ, ຄວາມຂີ້ດຽດ ແລະ ຄວາມເໝັນເນົ່າ ໃຫ້ທົນໃນສະພາບທີ່ຂາດແຄນທຸກຢ່າງ ແລ້ວກໍນຳຂ້າພະເຈົ້າອອກມາຕໍ່ໜ້າພວກທ່ານ ແລະ ປະຕິເສດບໍ່ຟັງຂ້າພະເຈົ້າ ແຕ່ກັບຫັນໄປຟັງພວກສັດຕູທີ່ຮ້າຍກາດຂອງຂ້າພະເຈົ້າແທນ; . . . ຖ້າພວກທ່ານມີສະຕິປັນຍາແທ້ ແລະ ເປັນແສງສະຫວ່າງໃຫ້ຊາວໂລກຈິງ ຈົ່ງລະວັງຕົວໄວ້ ຢ່າໄດ້ເຮັດບາບຕໍ່ສູ້ຂະບວນການຍຸຕິທຳ. ສ່ວນຂ້າພະເຈົ້ານັ້ນ ເປັນພຽງມະນຸດທີ່ອ່ອນແອຄົນໜຶ່ງ. ຊີວິດຂອງຂ້າພະເຈົ້າບໍ່ສຳຄັນຫຼາຍ; ສະນັ້ນ, ເມື່ອຂ້າພະເຈົ້າຂໍຮ້ອງພວກທ່ານໃຫ້ຕັດສິນຢ່າງເປັນທຳນັ້ນ ຂ້າພະເຈົ້າເວົ້າເພື່ອພວກທ່ານຫຼາຍກວ່າທີ່ຈະເວົ້າເພື່ອຕົນເອງ.”[18] {GC 112.2}

ໃນທີ່ສຸດພວກເຂົາກໍຍອມໃຫ້ເຈໂຣມເວົ້າ. ເພິ່ນກໍຄຸ້ເຂົ່າລົງຕໍ່ໜ້າຄະນະຜູ້ພິພາກສາ ແລະ ອະທິຖານຂໍໃຫ້ພຣະວິນຍານຂອງພຣະເຈົ້າຊົງຄວບຄຸມຄວາມຄິດ ແລະ ຄຳເວົ້າຂອງຕົນ ເພື່ອເພິ່ນຈະບໍ່ໄດ້ກ່າວໃນສິ່ງທີ່ຂັດຕໍ່ຄວາມຈິງ ຫຼື ກ່າວຄຳທີ່ບໍ່ສົມພຣະກຽດຂອງພຣະເຢຊູຜູ້ຊົງເປັນພຣະອາຈານຂອງເພິ່ນ. ໃນວັນນັ້ນ, ພຣະສັນຍາຂອງພຣະເຈົ້າໄດ້ສຳເລັດ ທີ່ພຣະອົງຊົງກ່າວໄວ້ກັບພວກສາວົກລຸ້ນທຳອິດວ່າ, “ພວກເຈົ້າຈະຖືກລາກດຶງນຳຕົວຂຶ້ນໄປຢູ່ຕໍ່ໜ້າບັນດາຜູ້ມີອຳນາດ ແລະ ບັນດາກະສັດເພາະເຫັນແກ່ເຮົາ. . . . ເມື່ອພວກເຂົາຈັບກຸມພວກເຈົ້າຂຶ້ນໄປນັ້ນ ຢ່າຄິດກະວົນກະວາຍເລີຍວ່າ ພວກເຈົ້າຈະເວົ້າຫຍັງແດ່ ຫຼື ຈະເວົ້າແນວໃດ, ເມື່ອເຖິງເວລານັ້ນ ພວກເຈົ້າຈະໄດ້ຮັບຖ້ອຍຄຳທີ່ພວກເຈົ້າຈະເວົ້າ ເພາະຖ້ອຍຄຳທີ່ພວກເຈົ້າຈະເວົ້ານັ້ນ ຈະບໍ່ມາຈາກພວກເຈົ້າເອງ, ແຕ່ແມ່ນພຣະວິນຍານຈາກພຣະບິດາຂອງພວກເຈົ້າທີ່ຈະເປັນຜູ້ກ່າວໃນພວກເຈົ້າ.” (ມັດທາຍ 10:18–20). {GC 112.3}

ແມ່ນແຕ່ພວກສັດຕູຂອງເຈໂຣມທັງຕົກຕະລຶງ ທັງປະທັບໃຈກັບຖ້ອຍຄຳຂອງເພິ່ນ. ເພິ່ນຖືກຂັງໃນຫ້ອງມືດໃຕ້ດິນເປັນເວລາໜຶ່ງປີ, ບໍ່ມີໂອກາດອ່ານໜັງສື ຫຼື ແມ່ນແຕ່ຈະເບິ່ງເຫັນສິ່ງໃດ. ເພິ່ນຢູ່ໃນສະພາບທີ່ຕ້ອງທົນທຸກທໍລະມານຢ່າງເຈັບປວດທັງກາຍ ແລະ ໃຈ. ແຕ່ຖ້ອຍຄຳຂອງເພິ່ນມີເຫດຜົນທີ່ແຈ່ມແຈ້ງ ແລະ ມີພະລັງເໝືອນກັບວ່າ ເພິ່ນໄດ້ສຶກສາຕະຫຼອດປີໂດຍບໍ່ມີສິ່ງໃດລົບກວນເລີຍ. ເຈໂຣມຍົກຕົວຢ່າງໃຫ້ຄົນທີ່ກຳລັງຟັງຢູ່ນັ້ນ ເຖິງຜູ້ບໍຣິສຸດໃນແຕ່ລະສະໄໝທີ່ຖືກຜູ້ພິພາກສາຕັດສິນລົງໂທດຢ່າງບໍ່ເປັນທຳ. ໃນເກືອບທຸກຊົ່ວອາຍຸຄົນ ມີຄົນທີ່ພະຍາຍາມຍົກລະດັບປະຊາຊົນໃນສະໄໝຂອງພວກເຂົາ ແຕ່ຖືກສັງຄົມປະນາມ ແລະ ຂັບໄລ່ໄສ່ສົ່ງ ເຊິ່ງໃນຍຸກສະໄໝຕໍ່ມາກໍປາກົດວ່າຄົນເຫຼົ່ານັ້ນສົມຄວນໄດ້ຮັບກຽດ. ພຣະຄຣິສກໍຍັງຖືກສານອະທຳພິພາກສາລົງໂທດໃນຖານະຜູ້ເຮັດຜິດເຊັ່ນກັນ. {GC 112.4}

ເມື່ອເຈໂຣມໄດ້ປະຕິເສດຄວາມເຊື່ອນັ້ນ ເພິ່ນໄດ້ຍອມຮັບວ່າຄຳຕັດສິນລົງໂທດຮັສຖືກຕ້ອງ. ແຕ່ບັດນີ້, ເຈໂຣມປະກາດຄຳສາລະພາບກັບໃຈ ແລະ ເປັນພະຍານວ່າ ຮັສເປັນຄົນບໍຣິສຸດບໍ່ມີຄວາມຜິດ ໂດຍກ່າວວ່າ, “ຂ້າພະເຈົ້າຮູ້ຈັກເພິ່ນຕັ້ງແຕ່ເພິ່ນອາຍຸຍັງນ້ອຍ. ເພິ່ນເປັນຄົນທີ່ຍອດຢ້ຽມທີ່ສຸດ

[18] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 2, ໜ້າ 146, 147.

ຄົນໜຶ່ງ ເປັນຄົນບໍຣິສຸດ ແລະ ທ່ຽງທຳ ຢ່າງໃດກໍຕາມເພິ່ນກໍຖືກຕັດສິນລົງໂທດ ເຖິງແມ່ນວ່າ ເພິ່ນບໍ່ມີຄວາມຜິດ; . . . ຂ້າພະເຈົ້າເອງກໍພ້ອມທີ່ຈະຕາຍດ້ວຍຄົນໜຶ່ງ, ຈະບໍ່ສະທົກສະທ້ານຕໍ່ຄວາມທຸກທໍລະມານທີ່ພວກສັດຕູ ແລະ ພະຍານເທັດໄດ້ກຽມໄວ້. ໃນວັນຂ້າງໜ້າ, ຄົນເຫຼົ່ານີ້ຈະຕ້ອງໃຫ້ການຕໍ່ອົງພຣະຜູ້ເປັນເຈົ້າໃນເລື່ອງທີ່ພວກເຂົາໄດ້ປັ້ນຂຶ້ນມາ ແລະ ບໍ່ມີສິ່ງໃດທີ່ຈະຫຼອກລວງພຣະເຈົ້າໄດ້."[19] *{GC 113.1}*

ດ້ວຍໃຈທີ່ສຳນຶກຜິດທີ່ໄດ້ປະຕິເສດຄວາມຈິງ ເຈໂຣມຈຶ່ງກ່າວຕໍ່ອີກວ່າ, "ໃນທ່າມກາງຄວາມບາບທັງຫຼາຍທີ່ຂ້າພະເຈົ້າເຄີຍເຮັດຕັ້ງແຕ່ສະໄໝເປັນໜຸ່ມມານີ້ ບໍ່ມີຄວາມບາບອັນໃດທີ່ເຮັດໃຫ້ໜັກໃຈ ແລະ ເສຍໃຈທີ່ສຸດ ເທົ່າກັບຄວາມບາບທີ່ຂ້າພະເຈົ້າໄດ້ເຮັດໃນສະຖານທີ່ທີ່ຮ້າຍກາດແຫ່ງນີ້ ເມື່ອຂ້າພະເຈົ້າເຫັນດ້ວຍກັບຄຳຕັດສິນຊົ່ວທີ່ກ່າວໂທດ ທ່ານ ໄວຄລິບ ແລະ ກ່າວໂທດ ຈອນ ຮັສ ຜູ້ບໍຣິສຸດທີ່ຖືກປະຫານຍ້ອນຄວາມເຊື່ອ. ຈອນ ຮັສ ເປັນທັ້ງອາຈານ ແລະ ເປັນສະຫາຍຂອງຂ້າພະເຈົ້າ. ແມ່ນແລ້ວ! ຂ້າພະເຈົ້າຂໍສາລະພາບຈາກໃຈຈິງ ດ້ວຍຄວາມຮູ້ສຶກຂີ້ດຽດກັບຕົວເອງທີ່ຫວັ່ນໄຫວຢ່າງໜ້າລັງກຽດ ທີ່ຂ້າພະເຈົ້າໄດ້ກ່າວປະນາມຄຳສອນຂອງທ່ານທັງສອງເພາະວ່າຢ້ານຄວາມຕາຍ. ຂ້າພະເຈົ້າຈຶ່ງຂໍຂາບທູນວິງວອນ . . . ຂໍໃຫ້ພຣະເຈົ້າຜູ້ຊົງຣິດທານຸພາບສູງສຸດຊົງອະໄພຄວາມຜິດບາບຂອງຂ້າພະເຈົ້າແດ່ທ້ອນ ໂດຍສະເພາະຢ່າງຍິ່ງແມ່ນຄວາມບາບນີ້ທີ່ຊົ່ວຮ້າຍທີ່ສຸດ." ແລ້ວເພິ່ນກໍຊີ້ໜ້າຄະນະຜູ້ພິພາກສາ ຂະນະທີ່ກ່າວຢ່າງໜັກແໜ້ນວ່າ, "ພວກທ່ານຕັດສິນລົງໂທດ ທ່ານ ໄວຄລິບ ແລະ ຈອນ ຮັສ ບໍ່ແມ່ນຍ້ອນຄຳສອນຂອງພວກເຂົາກະທົບຕໍ່ຫຼັກຄຳສອນຂອງຄຣິສຕະຈັກ ແຕ່ຍ້ອນວ່າພວກເຂົາຕຳໜິການກະທຳທີ່ໜ້າອັບອາຍຂອງພວກບາດຫຼວງ ແລະ ປະນາມທັງຄວາມຫຼູຫຼາ, ຄວາມຫຍິ່ງທະນົງຕົນ ກັບຄວາມບາບຊົ່ວຂອງພວກບາດຫຼວງ ແລະ ພວກຜູ້ນຳຄຣິສຕະຈັກ. ທຸກສິ່ງທີ່ຜູ້ບໍຣິສຸດທັງສອງໄດ້ຢືນຢັນ ລ້ວນແຕ່ເປັນສິ່ງທີ່ປະຕິເສດບໍ່ໄດ້, ຂ້າພະເຈົ້າຈຶ່ງຄິດ ແລະ ປະກາດຢືນຢັນສິ່ງເຫຼົ່ານັ້ນເໝືອນທ່ານທັງສອງ." *{GC 113.2}*

ໃນຂະນະທີ່ເຈໂຣມຍັງກ່າວຖ້ອຍຄຳຢູ່ນັ້ນ ພວກຜູ້ນຳຄຣິສຕະຈັກຂັດຈັງຫວະ ຕ່າງຄົນຕ່າງຕົວສັ່ນດ້ວຍຄວາມໂກດຮ້າຍ ແລ້ວຮ້ອງສຽງດັງວ່າ, "ພວກເຮົາຕ້ອງການຫຼັກຖານອັນໃດອີກ? ພວກເຮົາໄດ້ເຫັນກັບຕາຕົວເອງວ່າ ນີ້ແມ່ນຄົນນອກຮີດທີ່ດື້ດ້ານທີ່ສຸດ!" *{GC 114.1}*

ເຈໂຣມບໍ່ສະທົກສະທ້ານແຕ່ຢ່າງໃດຕໍ່ພະຍຸທີ່ພັດຖະຫຼົ່ມຢູ່ນັ້ນ, ເພິ່ນກ່າວວ່າ, "ແມ່ນຫຍັງອີກ! ພວກທ່ານຄິດວ່າຂ້າພະເຈົ້າຢ້ານທີ່ຈະຕາຍຫຼື? ພວກທ່ານໄດ້ຂັງຂ້າພະເຈົ້າໃນຫ້ອງໃຕ້ດິນທີ່ເປັນຕາຢ້ານແທ້ ຕະຫຼອດເວລາໜຶ່ງປີເຕັມ ເຊິ່ງເປັນສະພາບທີ່ຮ້າຍແຮງກວ່າຄວາມຕາຍເສຍອີກ. ພວກທ່ານປະຕິບັດຕໍ່ຂ້າພະເຈົ້າດ້ວຍຄວາມໂຫດຮ້າຍຍິ່ງກວ່າຊາວເທີກ[20], ຊາວຢິວ ຫຼື ຄົນທີ່ບໍ່ນັບຖືພຣະເຈົ້າ. ເນື້ອໜັງຂອງຂ້າພະເຈົ້າໄດ້ເປົ່າຈົນຫຼຸດອອກຈາກກະດູກໃນຂະນະທີ່ຂ້າພະເຈົ້າຍັງມີຊີວິດຢູ່. ແຕ່ຂ້າພະເຈົ້າບໍ່ຈົ່ມວ່າຫຍັງເລີຍ ເພາະການຈົ່ມວ່ານັ້ນບໍ່ເໝາະສົມກັບລູກຜູ້ຊາຍ, ແຕ່ຂ້າພະເຈົ້າຕ້ອງປະກາດວ່າ ຂ້າພະເຈົ້າຕົກໃຈຢ້ານທີ່ພວກທ່ານໄດ້ເຮັດຄວາມປ່າເຖື່ອນເຊັ່ນນີ້ຕໍ່ຄຣິສຕຽນຄົນໜຶ່ງ."[21] *{GC 114.2}*

ແລ້ວພະຍຸຄວາມໂກດຮ້າຍກໍຖະຫຼົ່ມໃສ່ອີກຄັ້ງໜຶ່ງ ແລະ ມີຄົນຟ້າວນຳເຈໂຣມກັບໄປຂັງຕໍ່. ແຕ່ໃນຂະນະດຽວກັນກໍມີບາງຄົນຮູ້ສຶກຊາບຊຶ້ງກັບຖ້ອຍຄຳຂອງເພິ່ນ, ພວກເຂົາຈຶ່ງພະຍາຍາມຊ່ວຍຊີວິດຂອງເພິ່ນເອົາໄວ້. ມີຜູ້ນຳຄຣິສຕະຈັກບາງຄົນໄປຢາມເຈໂຣມ ແລະ ຂໍຮ້ອງໃຫ້ເພິ່ນຍອມເຮັດຕາມຄຳສັ່ງຂອງສະພາ. ພວກເຂົາສັນຍາວ່າຈະໃຫ້ລາງວັນທີ່ຍິ່ງໃຫຍ່ ຖ້າເພິ່ນເລີກຕໍ່ຕ້ານຄຣິສຕະຈັກໂຣມ. ແຕ່ເຈໂຣມ

[19] ບອນໂຊດ, ເຫຼັ້ມ 2, ໜ້າ 151.

[20] ໝາຍເຖິງຊາວມຸດສະລິມແຫ່ງອານາຈັກໂອໂຕມັນ.

[21] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 2, ໜ້າ 151–153.

ຍັງຄົງຢືນຢັດຢ່າງໝັ້ນຄົງ ເໝືອນພຣະເຢຊູຄຣິສທີ່ຊົງຢືນຢັດ ເມື່ອຊາຕານສັນຍາທີ່ຈະໃຫ້ສະຫງ່າຣາສີ ຂອງໂລກແກ່ພຣະອົງ. {GC 114.3}

ຖືກປະຫານຍ້ອນເຊື່ອໃນພຣະຄຳພີ

ເຈໂຣມກ່າວວ່າ, "ຖ້າພິສູດຈາກພຣະຄຳພີອັນສັກສິດນັ້ນວ່າຂ້າພະເຈົ້າຜິດ ຂ້າພະເຈົ້າກໍຈະຍອມຮັບ ຜິດ." {GC 114.4}

ຜູ້ທີ່ມາເພື່ອລໍ້ລວງເພິ່ນຄົນໜຶ່ງຕອບວ່າ: "ຈະຕ້ອງພິສູດທຸກສິ່ງດ້ວຍພຣະຄຳພີຫຼື? ມີຜູ້ໃດສາມາດ ເຂົ້າໃຈພຣະຄຳພີໄດ້ ນອກຈາກຄຣິສຕະຈັກຈະຊ່ວຍຕີຄວາມ?" {GC 114.5}

ເຈໂຣມກໍຕອບພວກເຂົາວ່າ, "ທຳນຽມຂອງມະນຸດໜ້າເຫຼື້ອມໃສກວ່າຂ່າວປະເສີດຂອງພຣະຜູ້ຊ່ວຍ-ໃຫ້ລອດບໍ? ອາຈານໂປໂລບໍ່ໄດ້ຂໍຮ້ອງໃຫ້ຄົນຟັງທຳນຽມຂອງມະນຸດ ແຕ່ກ່າວວ່າ, 'ຈົ່ງຄົ້ນພຣະ-ຄຳພີ.'" {GC 114.6}

ຄົນນັ້ນຕອບວ່າ, "ເຈົ້າເປັນຄົນນອກຮີດ! ຂ້ອຍຍອມຮັບຜິດທີ່ມາຂໍຮ້ອງເຈົ້າດົນເຊັ່ນນີ້, ຂ້ອຍເຫັນ ວ່າ ຜີມານກຳລັງດົນໃຈເຈົ້າຢູ່."[22] {GC 114.7}

ໃນບໍ່ດົນຄຳຕັດສິນລົງໂທດເຈໂຣມກໍປະກາດອອກມາ. ເພິ່ນຖືກນຳອອກໄປຍັງບ່ອນດຽວກັນທີ່ຮັສ ຖືກປະຫານ. ຂະນະທີ່ເດີນທາງໄປນັ້ນເພິ່ນກໍຮ້ອງເພງ ໃບໜ້າສົດໃສດ້ວຍສັນຕິສຸກ ແລະ ຄວາມ ຊົມຊື່ນຍິນດີ. ເພິ່ນຈ້ອງເບິ່ງທີ່ພຣະຄຣິສ ຄວາມຕາຍຈຶ່ງບໍ່ໜ້າກົວອີກແລ້ວ. ເມື່ອເພັດຊະຄາດກຳລັງ ຈະຈູດໄຟດ້ານຫຼັງເພິ່ນ, ເຈໂຣມເວົ້າວ່າ, "ມາຈູດໄຟຕໍ່ໜ້າເລີຍ. ຖ້າແມ່ນເຮົາຢ້ານ, ເຮົາກໍຈະບໍ່ໄດ້ມາ ທີ່ນີ້." {GC 114.8}

ຖ້ອຍຄຳສຸດທ້າຍທີ່ເຈໂຣມກ່າວໃນຂະນະທີ່ແປວໄຟລຸກໄໝ້ຢູ່ຮອບຕົວແມ່ນຄຳອະທິຖານ. ເພິ່ນຮ້ອງ ທູນພຣະເຈົ້າວ່າ, "ພຣະບິດາຜູ້ຊົງຣິດທານຸພາບສູງສຸດເຈົ້າຂາ ຂໍຊົງໂຜດເມດຕາຂ້ານ້ອຍແດ່ທ້ອນ ແລະ ໃຫ້ອະໄພຄວາມຜິດບາບຂອງຂ້ານ້ອຍ ເພາະພຣະອົງຊົງຊາບວ່າ ຂ້ານ້ອຍຮັກຄວາມຈິງຂອງພຣະອົງ ຢູ່ສະເໝີ."[23] ແລ້ວສຽງຂອງເພິ່ນກໍງຽບໄປ ແຕ່ປາກຍັງຄົງຂະໝຸບຂະໝິບອະທິຖານຢູ່. ເມື່ອໄຟໄດ້ ເຜົາຜານຮ່າງກາຍຂອງເຈໂຣມຈົນໝົດແລ້ວ ມີຄົນເກັບຝຸ່ນກະດູກພ້ອມດ້ວຍດິນທີ່ຮອງຮັບເທົ້າກະດູກ ນັ້ນ ແລະ ໂຍນໄປໃນແມ່ນ້ຳໄຮນ໌ເໝືອນທີ່ພວກເຂົາໄດ້ເຮັດກັບຝຸ່ນກະດູກຂອງຮັສ. {GC 115.1}

ຜູ້ຖືກະບອງໄຟແຫ່ງຄວາມຈິງຂອງພຣະເຈົ້າຢ່າງສັດຊື່ນັ້ນໄດ້ຈົບຊີວິດລົງ, ແຕ່ແສງແຫ່ງຄວາມຈິງທີ່ ພວກເຂົາປະກາດ ແລະ ແບບຢ່າງການເປັນວິລະຊົນຂອງພວກເຂົາບໍ່ສາມາດດັບມອດໄດ້. ໃຫ້ມະນຸດ ລອງຈັບດວງຕາເວັນ ແລະ ຫັນມັນກັບຄືນເພື່ອບໍ່ໃຫ້ແສງອາລຸນເບີກຟ້າ ກໍຄົງງ່າຍກວ່າທີ່ຈະຫ້າມແສງ ແຫ່ງການປະຕິຮູບທີ່ໃນຂະນະນັ້ນເລີ່ມສ່ອງມາຍັງໂລກແລ້ວ. {GC 115.2}

ຂະນະສົ່ງຄາມຢ່າງອັດສະຈັນ

ການປະຫານຊີວິດຂອງຮັສເຮັດໃຫ້ປະຊາຊົນຊາວໂບຮີເມຍຕົກຕະລຶງດ້ວຍຄວາມໂກດຮ້າຍ. ຄົນທັງ ຊາດຮູ້ສຶກວ່າ ຮັສໄດ້ຕົກເປັນເຫຍື່ອຄວາມກຽດຊັງຂອງພວກບາດຫຼວງ ແລະ ການທໍລະຍົດຂອງ ຈັກກະພັດ. ມີການປະກາດວ່າຮັສເປັນອາຈານທີ່ສອນຄວາມຈິງຢ່າງສັດຊື່ ແລະ ມີການກ່າວຫາສະພາ ທີ່ຕັດສິນປະຫານຊີວິດຂອງຮັສນັ້ນວ່າ ມີຄວາມຜິດຖານຄາຕະກຳ. ມີຄົນໃສ່ໃຈຄຳສອນຂອງຮັສຫຼາຍ ກວ່າເກົ່າ. ສັນຕະປາປາເຄີຍປະກາດສັ່ງໃຫ້ເຜົາບົດຄວາມງານຂຽນຂອງທ່ານໄວຄຼິບໃຫ້ໝົດ, ແຕ່ບັດນີ້

[22] ໄວລີ, ເຫຼັ້ມ 3, ບົດ 10.
[23] ບອນໂຊດ, ເຫຼັ້ມ 2, ໜ້າ 168.

ມີຄົນນຳສ່ວນທີ່ບໍ່ໄດ້ຖືກທຳລາຍອອກມາຈາກທີ່ເຊື່ອງໄວ້ ແລະ ສຶກສາຄວບຄູ່ໄປກັບພຣະຄຳພີ. ບາງ ຄັ້ງພຣະຄຳພີທີ່ປະຊາຊົນຫາໄດ້ນັ້ນມີພຽງບາງສ່ວນ ແຕ່ພວກເຂົາໄດ້ສຶກສາເທົ່າທີ່ຫາໄດ້; ດັ່ງນັ້ນ, ຈຶ່ງມີ ຫຼາຍຄົນຮັບເຊື່ອຕາມຄຳສອນຂອງຂະບວນການປະຕິຮູບ. *{GC 115.3}*

ພວກທີ່ຂ້າຮັສບໍ່ຢູ່ລ້າເພື່ອລໍເບິ່ງໄຊຊະນະແຫ່ງອຸດົມການຂອງເພິ່ນ. ສັນຕະປາປາ ແລະ ຈັກກະພັດ ຈັບມືກັນເພື່ອບົດບີ້ຝ່າຍປະຕິຮູບ, ກອງທັບຈັກກະພັດຊີກິມົ່ງຈຶ່ງບຸກໂຈມຕີປະເທດໂບຮີເມຍ. *{GC 115.4}*

ອົງພຣະຜູ້ເປັນເຈົ້າຊົງໂຜດໃຫ້ມີຄົນຂຶ້ນມາກູ້ຊາດ ກໍຄືຜູ້ນຳຊາວໂບຮີເມຍຊື່ ຊີສະກາ (Ziska). ເພິ່ນ ເປັນໜຶ່ງໃນນາຍພົນທີ່ເກັ່ງທີ່ສຸດໃນສະໄໝນັ້ນ ເຖິງແມ່ນວ່າ ຫຼັງຈາກການເລີ່ມສົງຄາມບໍ່ດົນ ມີ ເຫດການເກີດຂຶ້ນເຮັດໃຫ້ເພິ່ນຕາບອດສະໜິດກໍຕາມ. ຊາວໂບຮີເມຍເຊື່ອວ່າພຣະເຈົ້າຈະຊົງຊ່ວຍເຫຼືອ ພວກເຂົາ ແລະ ເຊື່ອວ່າອຸດົມການຂອງພວກຕົນນັ້ນມີຄວາມຊອບທຳ, ພວກເຂົາຈຶ່ງຕ້ານທານກອງທັບທີ່ ໃຫຍ່ທີ່ສຸດທີ່ຈັກກະພັດສາມາດສົ່ງມາໂຈມຕີໄດ້. ຈັກກະພັດໄດ້ລະດົມກອງທັບໃໝ່ຫຼາຍຕໍ່ຫຼາຍເທື່ອ ເພື່ອ ບຸກເຂົ້າໄປໃນປະເທດໂບຮີເມຍ ແຕ່ທຸກຄັ້ງກໍຕ້ອງປະລາໄຊຢ່າງໜ້າອັບອາຍ. ໃນສະໄໝນັ້ນຜູ້ທີ່ເຊື່ອໃນ ຄຳສອນຂອງ ຈອນ ຮັສ ເປັນທີ່ຮູ້ຈັກກັນໃນນາມວ່າ: ຊາວຮັສ (Hussites). ພວກເຂົາບໍ່ຢ້ານ ຕາຍ ແລະ ບໍ່ມີສິ່ງໃດທີ່ຈະຢືນຕໍ່ສູ້ພວກເຂົາໄດ້. ຫຼັງຈາກເລີ່ມສົງຄາມມາບໍ່ເທົ່າໃດປີ ນາຍພົນຊີສະກາ ຜູ້ເກັ່ງກ້ານັ້ນກໍເສຍຊີວິດ ແຕ່ມີຄົນຊື່ ໂປຣໂກເປຍ (Procopius) ມາຮັບຕຳແໜ່ງຕໍ່. ໂປຣໂກເປຍມີ ຄວາມກ້າຫານ ແລະ ເປັນນາຍພົນທີ່ຊຳນານບໍ່ຕ່າງຫຍັງກັບຊີສະກາ ແລະ ໃນບາງດ້ານກໍຍັງມີຄວາມ ສາມາດໃນການເປັນຜູ້ນຳຫຼາຍກວ່າຊີສະກາເສຍອີກ. *{GC 116.1}*

ພວກສັດຕູຂອງຊາວໂບຮີເມຍ ເມື່ອຮູ້ວ່ານາຍພົນຕາບອດໄດ້ເສຍຊີວິດແລ້ວ ກໍຮູ້ສຶກວ່າເປັນໂອກາດ ດີທີ່ຈະໄດ້ທຸກຢ່າງທີ່ເຄີຍສູນເສຍໄປນັ້ນໃຫ້ກັບຄືນມາ. ບັດນີ້ສັນຕະປາປາປະກາດສົງຄາມສາສະໜາ ຕໍ່ສູ້ຊາວຮັສອີກ ຈຶ່ງມີການລະດົມກອງທັບມະຫຶມາເພື່ອບຸກຢຶດປະເທດໂບຮີເມຍ ແຕ່ກໍຕ້ອງປະລາໄຊ ຢ່າງຮາບຄາບ. ແລ້ວກໍມີການປະກາດສົງຄາມສາສະໜາອີກຄັ້ງໜຶ່ງ, ທຸກປະເທດໃນເອີຣົບທີ່ຂຶ້ນກັບ ລະບອບສັນຕະປາປາໄດ້ລະດົມຄົນ, ເງິນ ແລະ ອາວຸດເພື່ອໃຊ້ໃນການຕໍ່ສູ້. ມີຄົນຈຳນວນມະຫາສານ ຫຼັ່ງໄຫຼເຂົ້າມາຢືນຢູ່ໃຕ້ທຸ່ມທຸງຂອງສັນຕະປາປາ ໂດຍມີການຢືນຢັນວ່າ ໃນທີ່ສຸດພວກຊາວຮັສນອກຮີດ ຈະຕ້ອງຖືກທຳລາຍໃຫ້ສິ້ນຊື່. ກອງທັບໃຫຍ່ມະຫຶມາບຸກເຂົ້າໄປໃນປະເທດໂບຮີເມຍ ດ້ວຍຄວາມ ໝັ້ນໃຈວ່າຈະຕ້ອງມີໄຊຊະນະຢ່າງແນ່ນອນ, ແຕ່ປະຊາຊົນຮວມກຳລັງຕໍ່ຕ້ານ. ກອງທັບທັ້ງສອງຝ່າຍ ຂະຫຍັບເຂົ້າຫາກັນ ຈົນເຫຼືອແຕ່ສາຍນ້ຳກັ້ນຢູ່ລະຫວ່າງກາງ. “ກອງທັບຝ່າຍສັນຕະປາປາມີກຳລັງ ທະຫານຫຼາຍກວ່າຝ່າຍປະຕິຮູບ, ແຕ່ແທນທີ່ຈະບຸກຂ້າມລຳທານ ແລະ ສູ້ຮົບກັບຊາວຮັສທີ່ພວກເຂົາ ເດີນທາງມາໄກເພື່ອຕໍ່ສູ້ນັ້ນ, ພວກເຂົາກັບຢືນຈ້ອງເບິ່ງທະຫານຊາວຮັສຢ່າງມິດງຽບ.”[24] ແລ້ວໃນທັນໃດ ນັ້ນ ທະຫານຝ່າຍສັນຕະປາປາເກີດຄວາມຢ້ານກົວໂດຍບໍ່ຮູ້ສາເຫດ. ກອງທັບຂອງພວກເຂົາຈຶ່ງແຕກ ກະຈາຍໄປໂດຍບໍ່ມີການຕໍ່ສູ້ ເໝືອນມີອຳນາດທີ່ເບິ່ງບໍ່ເຫັນຂັບໄລ່ພວກເຂົາໄປ. ກອງທັບຊາວຮັສໄລ່ ຂ້າຟັນຜູ້ທີ່ໜີໄປໃຫ້ຕາຍເປັນຈຳນວນຫຼາຍ ແລະ ມີສິ່ງຂອງຈຳນວນມະຫາສານທີ່ຕົກຢູ່ໃນມືຂອງຊາວ ຮັສ. ສະນັ້ນ, ແທນທີ່ສົງຄາມຄັ້ງນີ້ຈະເຮັດໃຫ້ຊາວໂບຮີເມຍຍາກຈົນລົງ ກັບກາຍເປັນເຫດໃຫ້ມີຊັບສິນ ເພີ່ມຂຶ້ນ. *{GC 116.2}*

ຕໍ່ມາບໍ່ເທົ່າໃດປີ ມີສັນຕະປາປາອົງໃໝ່ປະກາດສົງຄາມສາສະໜາອີກຄັ້ງໜຶ່ງ ແລະ ເໝືອນຄັ້ງ ກ່ອນ ມີການຮວບຮວມກຳລັງພົນ ແລະ ເງິນຈາກທຸກປະເທດໃນເອີຣົບທີ່ຂຶ້ນກັບລະບອບສັນຕະປາປາ. ມີການສະເໜີຄ່າຕອບແທນທີ່ຍິ່ງໃຫຍ່ໃຫ້ແກ່ທຸກຄົນທີ່ຈະສ່ຽງອັນຕະລາຍໃນສົງຄາມຄັ້ງນີ້. ທະຫານ ຝ່າຍສັນຕະປາປາທຸກຄົນຈະໄດ້ຮັບອະໄພຍະໂທດຕໍ່ອາດຊະຍາກຳທີ່ຊົ່ວຮ້າຍທີ່ສຸດ. ສ່ວນທຸກຄົນທີ່

[24] ໄວລີ, ເຫຼັ້ມ 3, ບົດ 17.

ຕາຍໃນສົງຄາມ ກໍຈະໄດ້ຮັບລາງວັນທີ່ອຸດົມສົມບູນໃນສະຫວັນ ໃນຂະນະທີ່ຜູ້ລອດຕາຍຈະໄດ້ຮັບ ກຽດ ແລະ ສ່ວນແບ່ງຂອງສິ່ງທີ່ຍຶດມາໃນສະໜາມຮົບ. ກໍເປັນອີກຄັ້ງໜຶ່ງທີ່ມີການລະດົມກອງທັບ ມະຫາສານ; ພວກເຂົາຂ້າມເຂດແດນເຂົ້າມາໃນປະເທດໂບຮີເມຍ. ກອງທັບຊາວຮັສຖອຍໄປຕໍ່ໜ້າ ກອງທັບສັນຕະປາປາ ແລະ ພວກທີ່ບຸກລຸກກໍຕາມເຂົ້າໄປເລິກໃນເຂດແດນຂອງໂບຮີເມຍ ເຮັດໃຫ້ ພວກເຂົາຄິດວ່າຊະນະແລ້ວ. ໃນທີ່ສຸດກອງທັບຂອງໂປຣໂກເປຍໄດ້ປັກຫຼັກຕໍ່ສູ້. ພວກເຂົາຫັນກັບ ມາ ແລະ ເດີນກົງໄປເພື່ອສູ້ຮົບກັບສັດຕູ. ເມື່ອທະຫານຝ່າຍສັນຕະປາປາຮູ້ວ່າພວກຕົນຜິດພາດ ກໍ ຢູ່ຕໍ່ໃນຄ້າຍທະຫານລໍຖ້າການຕໍ່ສູ້. ພວກເຂົາໄດ້ຍິນສຽງຍ່າງຂອງກອງທັບຊາວຮັສກ່ອນທີ່ຈະເຫັນ ທະຫານ ເຮັດໃຫ້ທຸກຄົນໃນຄ້າຍຕົກໃຈຢ້ານ. ພວກເຈົ້າແຂວງ, ນາຍພົນ ແລະ ທະຫານບົກຕ່າງ ຄົນຕ່າງແກວ່ງເສື້ອຫຸ້ມເກາะຖີ້ມ ແລະ ໜີໄປຄົນລະທິດຄົນລະທາງ. ຕົວແທນຂອງສັນຕະປາປາທີ່ນຳ ການບຸກລຸກໃນຄັ້ງນີ້ ພະຍາຍາມຮວບຮວມທະຫານທີ່ຢ້ານກົວ ແລະ ແຕກກະຈາຍໄປ ແຕ່ກໍບໍ່ໄດ້ ຜົນ. ເຖິງແມ່ນວ່າລາວຈະພະຍາຍາມຢ່າງສຸດກຳລັງກໍຕາມ ແຕ່ລາວກໍຖືກກວາດໄປພ້ອມກັບພວກທີ່ ຖອຍໜີ ເໝືອນຖືກຄື້ນທະເລພັດພາ. ຝ່າຍສັນຕະປາປາຖືກຕີພ່າຍໃຫ້ມ້າງໝຸ່ນ ຈຶ່ງເປັນອີກຄັ້ງໜຶ່ງທີ່ ມີສິ່ງຂອງມາກມາຍຕົກຢູ່ໃນມືຂອງພວກຊາວຮັສ. *{GC 116.3}*

ນີ້ເປັນຄັ້ງທີສອງທີ່ບັນດາປະເທດທີ່ມີອຳນາດຫຼາຍທີ່ສຸດໃນເອີຣົບ ໄດ້ຮວບຮວມກອງທັບທີ່ໃຫຍ່ ມະຫຶມາ ປະກອບດ້ວຍຊາຍຊາດທະຫານທີ່ເກັ່ງກ້າ ເຊິ່ງໄດ້ຮັບການຝຶກຝົນມາຢ່າງດີ ແລະ ມີ ອາວຸດຄົບຖ້ວນ ແຕ່ບໍ່ໄດ້ໃຊ້ອາວຸດເຫຼົ່ານັ້ນເລີຍ ເພາะຕ້ອງໜີໄປຕໍ່ໜ້າໝ່ວຍປົກປ້ອງປະເທດເລັກນ້ອຍ ເຊິ່ງກ່ອນໜ້ານີ້ນັບວ່າເປັນປະເທດທີ່ດ້ອຍແຮງອ່ອນກຳລັງ. ນີ້ແມ່ນການສຳແດງເຖິງຣິດອຳນາດຂອງ ພຣະເຈົ້າ. ພວກທີ່ບຸກເຂົ້າໄປ ຕົກໃຈຢ້ານດ້ວຍຄວາມຢ້ານກົວທີ່ເໜືອທຳມະຊາດ. ພຣະເຈົ້າຜູ້ທີ່ຊົງ ໂຍນກອງທັບຟາໂຣລົງໃນທະເລແດງ, ຜູ້ທີ່ຊົງໄລ່ກອງທັບຊາວມີດີອານດ້ວຍທະຫານ 300 ຄົນຂອງ ກີເດໂອນ, ຄືຜູ້ທີ່ຊົງປະຫານຊີວິດກອງທັບອັດຊີເຣຍໃນຄືນດຽວນັ້ນ, ກໍຊົງຍື່ນພຣະຫັດຂອງພຣະອົງ ອອກເພື່ອທຳລາຍກຳລັງຂອງພວກທີ່ບີບບັງຄັບ. “ເຂົາທັງຫຼາຍມີຄວາມຢ້ານກົວຫຼາຍ ໃນທີ່ເຊິ່ງບໍ່ມີ ຄວາມໜ້າຢ້ານກົວເລີຍ, ເພາะພຣະເຈົ້າຊົງບັນດານໃຫ້ກະດູກຂອງສັດຕູທີ່ຕັ້ງຄ້າຍລ້ອມຮອບພວກທ່ານ ກະຈັດກະຈາຍໄປ, ເຂົາຕ້ອງອັບອາຍເພາะພຣະເຈົ້າຊົງປະຖິ້ມພວກເຂົາເສຍແລ້ວ.” (ເພງສັນລະເສີນ 53:5 ດັດແປງຈາກສະບັບ TH1940). *{GC 117.1}*

ອົດທົນລໍຄອຍແສງສະຫວ່າງ

ຜູ້ນຳຝ່າຍສັນຕະປາປາໝົດຫວັງທີ່ຈະຊະນະດ້ວຍການໃຊ້ກຳລັງ ພວກເຂົາຈຶ່ງຫັນມາໃຊ້ວິທີທາງ ການທູດໃນທີ່ສຸດ. ພວກເຂົາໄດ້ເຮັດຂໍ້ຕົກລົງຮ່ວມກັນຂຶ້ນ, ແຕ່ເຖິງແມ່ນວ່າຂໍ້ຕົກລົງດັ່ງກ່າວອ້າງວ່າຈະ ໃຫ້ຊາວໂບຮີເມຍມີເສລີພາບທາງຈິດສຳນຶກ, ແຕ່ໃນຄວາມເປັນຈິງ ເປັນການຫຼອກລວງໃຫ້ພວກເຂົາຕົກ ຢູ່ພາຍໃຕ້ອຳນາດຂອງຄຣິສຕະຈັກໂຣມ. ຊາວໂບຮີເມຍລະບຸເງື່ອນໄຂສັນຕິພາບກັບໂຣມສີ່ຂໍ້ ຄື: 1) ຕ້ອງ ມີເສລີພາບໃນການເທດສະໜາຈາກພຣະຄຳພີ, 2) ທຸກຄົນໃນຄຣິສຕະຈັກມີສິດໃນເຂົ້າຈີ່ ແລະ ນ້ຳ ອະງຸ່ນຂອງພິທີມະຫາສະໜິດ, ແລະ ໃຫ້ນຳນະມັດສະການໃນພາສາຂອງປະຊາຊົນ, 3) ພວກ ບາດຫຼວງບໍ່ມີສິດຮັບຕຳແໜ່ງ ຫຼື ອຳນາດຝ່າຍການປົກຄອງ, ແລະ 4) ຖ້າມີການເຮັດຜິດ ກົດໝາຍ ສານຝ່າຍປົກຄອງຈະຕັດສິນຄະດີ ບໍ່ວ່າຜູ້ທີ່ຖືກຟ້ອງນັ້ນຈະເປັນບາດຫຼວງ ຫຼື ປະຊາຊົນ ກໍຕາມ. ໃນທີ່ສຸດເຈົ້າໜ້າທີ່ຝ່າຍສັນຕະປາປາກໍຕົກລົງວ່າ “ຈະຍອມຮັບເອົາມາດຕາສີ່ຂໍ້ຂອງພວກ ຊາວຮັສ ແຕ່ວ່າສິດໃນການຕີຄວາມ ແລະ ໃນການກຳນົດຄວາມໝາຍທີ່ແນ່ນອນນັ້ນ ເປັນຂອງ

ສະພາ ໝາຍເຖິງສັນຕະປາປາ ແລະ ຈັກກະພັດນັ້ນເອງ."[25] ພວກເຂົາຈຶ່ງໄດ້ເຮັດສົນທິສັນຍາ ຂຶ້ນໂດຍອາໄສເງື່ອນໄຂດັ່ງກ່າວ. ດ້ວຍເຫດນີ້, ຄຣິສຕະຈັກໂຣມຈຶ່ງໃຊ້ອຸບາຍຫຼອກລວງ ເພື່ອໄດ້ໃນ ສິ່ງທີ່ພວກເຂົາບໍ່ສາມາດໄດ້ດ້ວຍການສູ້ຮົບ, ເພາະວ່າເມື່ອຄຣິສຕະຈັກໂຣມຕີຄວາມມາດຕາຕ່າງ ໆ ຂອງຊາວຣັສ ກໍບໍ່ຕ່າງຫຍັງກັບທີ່ພວກເຂົາຕີຄວາມພຣະຄຳພີ ຄືຈະຕີຄວາມເພື່ອເປັນໄປຕາມຄວາມ ປະສົງຂອງຕົນເອງ. *{GC 118.1}*

ມີຊາວໂບຮີເມຍຈຳນວນຫຼາຍທີ່ບໍ່ສາມາດຍອມຮັບໃນສົນທິສັນຍານີ້ ເພາະເຫັນວ່າຈະເປັນເຫດໃຫ້ ຕ້ອງສູນເສຍສິດທິຂອງຕົນ. ມີການຂັດແຍ້ງ ແລະ ການແຕກແຍກກັນຂຶ້ນ ເຊິ່ງນຳໄປສູ່ການຂ້າຟັນກັນ ເອງ. ໃນການຕໍ່ສູ້ນີ້ ໂປຣໂກເປຍ ນາຍພົນຜູ້ເກັ່ງກ້າກໍລົ້ມຕາຍ ແລະ ສິດເສລີພາບຂອງຊາວໂບຮີເມຍ ກໍດັບສູນ. *{GC 118.2}*

ບັດນີ້ຈັກກະພັດຊີກິມົ່ງຜູ້ທີ່ເຄີຍທໍລະຍົດຕໍ່ຣັສ ແລະ ເຈໂຣມນັ້ນ ກໍກາຍເປັນກະສັດຂອງປະເທດ ໂບຮີເມຍ ແລະ ເຖິງແມ່ນວ່າເພິ່ນໄດ້ສັນຍາທີ່ຈະປ້ອງກັນສິດທິຕ່າງ ໆ ຂອງຊາວໂບຮີເມຍກໍຕາມ ເພິ່ນກໍ ເລີ່ມຕົ້ນຕັ້ງລະບອບສັນຕະປາປາຂຶ້ນ. ແຕ່ຊີກິມົ່ງບໍ່ໄດ້ປະໂຫຍດຫຍັງຫຼາຍຈາກການຮັບໃຊ້ຄຣິສຕະຈັກ ໂຣມ. ເພິ່ນໄດ້ເຮັດວຽກຢ່າງໜັກໜ່ວງ ແລະ ສ່ຽງອັນຕະລາຍມາຕະຫຼອດ 20 ປີ. ກອງທັບອ່ອນ ກຳລັງ, ຄັງເງິນກໍແຫ້ງ ເພາະການຕໍ່ສູ້ອັນດົນນານທີ່ບໍ່ໄດ້ເກີດຜົນ. ບັດນີ້ຫຼັງຈາກປົກຄອງເປັນ ກະສັດໂບຮີເມຍໜຶ່ງປີ ເພິ່ນກໍເສຍຊີວິດ ປະຖິ້ມຣາຊອານາຈັກໄວ້ໃນສະພາບທີ່ໃກ້ເກີດສົງຄາມກາງ ເມືອງ ແລະ ມອບຊື່ສຽງທີ່ເສຍຫາຍເປັນມໍລະດົກຕົກທອດໃຫ້ຄົນລຸ້ນຫຼັງ. *{GC 118.3}*

ມີການຕໍ່ສູ້ ແລະ ການຂ້າຟັນລັນແທງກັນຢ່າງຕໍ່ເນື່ອງ. ມີກອງທັບຄົນຕ່າງຊາດບຸກເຂົ້າໄປໃນປະເທດ ໂບຮີເມຍອີກ, ສ່ວນປະຊາຊົນນັ້ນກໍເປັນທຸກກັບຄວາມແຕກແຍກພາຍໃນ. ໃນຂະນະດຽວກັນ, ຄົນທີ່ຍັງ ສັດຊື່ຕໍ່ຂ່າວປະເສີດກໍຖືກກົດຂີ່ຂົ່ມເຫັງຢ່າງຮ້າຍແຮງ. *{GC 118.4}*

ໃນເມື່ອຄົນທີ່ເຄີຍເປັນພີ່ນ້ອງໄປຕົກລົງກັບຄຣິສຕະຈັກໂຣມ ແລະ ຮັບເອົາຄຳສອນທຽມເທັດ, ຄົນ ທີ່ຍຶດໝັ້ນໃນຄວາມເຊື່ອບູຮານ ກໍຮວມຕົວກັນໃນຄຣິສຕະຈັກໃໝ່ພາຍໃຕ້ຊື່ວ່າ: "ກຸ່ມພີ່ນ້ອງຜູ້ເປັນ ໜຶ່ງດຽວ" (United Brethren). ຄົນຈາກທຸກຊົນຊັ້ນໄດ້ແຊ່ງດ່າພວກເຂົາທີ່ເຮັດຢ່າງນີ້, ແຕ່ພວກເຂົາບໍ່ ຫວັ່ນໄຫວ ເຖິງແມ່ນວ່າຈະຕ້ອງຫຼົບລີ້ຢູ່ໃນປ່າ ແລະ ຕາມຖ້ຳກໍຕາມ, ພວກເຂົາຍັງປະຊຸມກັນເພື່ອອ່ານ ພຣະຄຳຂອງພຣະເຈົ້າ ແລະ ເພື່ອຮ່ວມນະມັດສະການພຣະອົງ. *{GC 119.1}*

ຊາວໂບຮີເມຍຜູ້ສັດຊື່ໄດ້ແອບສົ່ງຜູ້ສື່ສານອອກໄປໃນປະເທດຕ່າງ ໆ ພວກເຂົາຈຶ່ງຮັບຮູ້ວ່າ ໃນບ່ອນ ຕ່າງ ໆ "ມີຄົນຈຳນວນໜ້ອຍທີ່ຍອມຮັບຄວາມຈິງ, ສອງສາມຄົນໃນເມືອງນີ້ ແລະ ອີກສອງສາມ ຄົນໃນເມືອງນັ້ນ. ແຕ່ລະຄົນຖືກກົດຂີ່ຂົ່ມເຫັງເໝືອນພວກເຂົາ. ນອກຈາກນັ້ນ, ພວກເຂົາໄດ້ຮຽນຮູ້ ວ່າ ທ່າມກາງສາຍພູອານເບີ (Alps) ມີຄຣິສຕະຈັກບູຮານທີ່ມີພຣະຄຳພີເປັນຮາກຖານ ແລະ ທີ່ ຄັດຄ້ານການຂາບໄຫວ້ຮູບເຄົາລົບ ແລະ ຄວາມຊົ່ວຂອງຄຣິສຕະຈັກໂຣມ."[26] ພວກເຂົາໄດ້ຮັບຂ່າວນີ້ ດ້ວຍຄວາມຊື່ນຊົມຍິນດີ ແລ້ວຈຶ່ງມີການເປີດການສື່ສານລະຫວ່າງພີ່ນ້ອງທີ່ໂບຮີເມຍກັບຄຣິສຕຽນຊາວ ໂວດົວ. *{GC 119.2}*

ຊາວໂບຮີເມຍທີ່ສັດຊື່ຕໍ່ຂ່າວປະເສີດໄດ້ຄອຍເຝົ້າຢູ່ຕະຫຼອດຄ່ຳຄືນແຫ່ງການຖືກກົດຂີ່ຂົ່ມເຫັງ. ໃນ ເວລາທີ່ມືດມົນທີ່ສຸດ ພວກເຂົາຫັນໄປເບິ່ງຂອບຟ້າເໝືອນຄົນທີ່ເຝົ້າລໍຄອຍຮຸ່ງອາລຸນໃໝ່. "ພວກເຂົາ ອາໄສຢູ່ໃນຍຸກສະໄໝທີ່ເຕັມໄປດ້ວຍຄວາມຊົ່ວ, . . . ແຕ່ພວກເຂົາຈື່ຈຳຖ້ອຍຄຳຂອງຣັສ ທີ່ຕໍ່ມາເຈໂຣມໄດ້ ກ່າວຢ້ຳອີກວ່າ ຈະຕ້ອງລໍຖ້າອີກໜຶ່ງສະຕະວັດກ່ວາແສງແຫ່ງວັນໃໝ່ຈະສ່ອງຈ້າ. ຊາວຣັສຮັກສາຖ້ອຍຄຳ

[25] ໄວລີ, ເຫຼັ້ມ 3, ບົດ 18.
[26] ໄວລີ, ເຫຼັ້ມ 3, ບົດ 19.

ເຫຼົ່ານີ້ເໝືອນຊາວອິດສະຣາເອນສະໄໝເປັນທາດໃນເອຢິບໄດ້ຮັກສາຖ້ອຍຄຳຂອງໂຢເຊັບທີ່ກ່າວວ່າ, ‘ຂ້ອຍໃກ້ຈະສິ້ນໃຈຕາຍແລ້ວ, ແຕ່ພຣະເຈົ້າຈະຮັກສາພວກເຈົ້າຢ່າງແນ່ນອນ ແລະ ພຣະອົງຈະນຳພວກເຈົ້າອອກໄປ.’”[27] “ໃນຊ່ວງທ້າຍສະຕະວັດທີ 15 ຄຣິສຕະຈັກຂອງ ‘ກຸ່ມພີ່ນ້ອງຜູ້ເປັນໜຶ່ງດຽວ’ ຄ່ອຍ ໆ ເພີ່ມຂຶ້ນຢ່າງຊ້າ ໆ. ເຖິງແມ່ນວ່າພວກເຂົາຍັງຖືກກົດຂີ່ຂົ່ມເຫັງຢູ່ໃນລະດັບໜຶ່ງກໍຕາມ ແຕ່ເມື່ອທຽບກັບອະດີດກໍຖືວ່າເປັນຊ່ວງເວລາທີ່ສະຫງົບພໍສົມຄວນ. ໃນຕົ້ນສະຕະວັດທີ 16 ພວກເຂົາມີຄຣິສຕະຈັກທັງໝົດເຖິງ 200 ແຫ່ງໃນປະເທດໂบฮีเมย ແລະ ປະເທດໂมเรเวย.”[28] “ກຸ່ມຄົນທີ່ເຫຼືອຢູ່ມີຫຼາຍເຖິງຂະໜາດນີ້ ທີ່ໜີໄພທຳລາຍຈາກຄວາມຮ້າຍແຮງຂອງກອງໄຟ ແລະ ຄົມດາบ ຈົນສາມາດເຫັນແສງອາລຸນໃໝ່ທີ່ຣັສໄດ້ທຳนอายไว้.”[29] *{GC 119.3}*

[27] *ອ້າງອີງຈາກທີ່ດຽວກັน*, ເຫຼັ້ม 3, บົด 19.

[28] ເອຊະຣາ ຮານລ໌ ຈີເລັດ (Ezra Hall Gillett), *ຊີວິດ ແລະ ສະໄໝຂອງ ຈอน ຣัส*, ເຫຼັ້ม 2, ໜ້າ 570.

[29] ไอสิ, ເຫຼັ້ม 3, บົด 19.



ລູເທີຕິດປະກາດຄຳປະທ້ວງ 95 ຂໍ້ ໄວ້ທີ່ປະຕູໂບດເພື່ອຕໍ່ຕ້ານຄຳສອນເລື່ອງໃບລ້າງບາບ.

ເບິ່ງໜ້າ 94.

Image generated with AI (Google Gemini).

7

ລູເທີແຍກຈາກຄຣິສຕະຈັກໂຣມ

ນັກປະຕິຮູບຈາກຄອບຄົວຍາກຈົນ

ໃນທ່າມກາງຄົນທີ່ຖືກຮຽກເອີ້ນໃຫ້ນຳຄຣິສຕະຈັກອອກຈາກຄວາມມືດຂອງລະບອບສັນຕະປາປາ ເຂົ້າສູ່ແສງສະຫວ່າງແຫ່ງຄວາມເຊື່ອທີ່ບໍຣິສຸດນັ້ນ, ມາຕິນ ລູເທີ (Martin Luther) ຢືນຢູ່ແນວໜ້າ ສຸດ. ເພິ່ນເປັນຄົນຫ້າວຫັນ ແລະ ກະຕືລືລົ້ນ, ມີຄວາມມຸ່ງໝັ້ນອຸທິດຕົນ, ບໍ່ຢ້ານກົວສິ່ງໃດ ມີແຕ່ ຢ້ານຢຳພຣະເຈົ້າ. ເພິ່ນບໍ່ຍອມຮັບຮາກຖານຄວາມເຊື່ອດ້ານສາສະໜາອື່ນໃດ ນອກຈາກພຣະຄຳພີອັນ ສັກສິດ. ລູເທີເປັນຄົນທີ່ພຣະເຈົ້າຊົງເລືອກໃຫ້ຮັບມືກັບບັນຫາໃນຍຸກສະໄໝຂອງເພິ່ນ. ພຣະອົງຊົງໃຊ້ ເພິ່ນໃຫ້ປະຕິຮູບຄຣິສຕະຈັກຄັ້ງໃຫຍ່ ແລະ ສ່ອງແສງສະຫວ່າງໄປທົ່ວໂລກ. *{GC 120.1}*

ລູເທີມາຈາກຄອບຄົວທີ່ຍາກຈົນ ເໝືອນກັບຜູ້ປະກາດຂ່າວປະເສີດລຸ້ນທຳອິດ. ເພິ່ນໃຊ້ຊີວິດຊ່ວງໄວ ເດັກໃນຊົນນະບົດກັບຄອບຄົວຜູ້ເປັນຊາວເຢຍລະມັນ. ທຸກມື້ພໍ່ຂອງເພິ່ນຕ້ອງເຮັດວຽກໃນເໝືອງແຮ່ ເພື່ອ ຫາເງິນສົ່ງລູເທີຮຽນ ໂດຍຕັ້ງໃຈວ່າຈະໃຫ້ລູກຊາຍຄົນນີ້ຮຽນເປັນນັກກົດໝາຍ. ແຕ່ພຣະເຈົ້າມີພຣະປະສົງ ໃຫ້ລູເທີເປັນຜູ້ກໍ່ສ້າງໃນພຣະວິຫານອັນຍິ່ງໃຫຍ່ ທີ່ຄ່ອຍ ໆ ກໍ່ຕັ້ງຂຶ້ນເປັນເວລາຫຼາຍສະຕະວັດ. ລູເທີ ຕ້ອງຜ່ານຄວາມທຸກຍາກລຳບາກ, ຄວາມຂາດແຄນ ແລະ ການຝຶກວິໄນຢ່າງເຂັ້ມງວດ ເຊິ່ງເປັນ ໂຮງຮຽນທີ່ພຣະເຈົ້າຜູ້ຊົງມີພຣະປັນຍາອັນລ້ຳເລີດ ຊົງໃຊ້ເພື່ອຫຼໍ່ຫຼອມເພິ່ນສຳລັບພາລະກິດສຳຄັນແຫ່ງ ຊີວິດ. *{GC 120.2}*

ພໍ່ຂອງລູເທີເປັນຄົນໜ້ວໄວໃຈໝັ້ນຄົງ ແລະ ມີບຸກຄະລິກທີ່ເຂັ້ມແຂງ, ສັດຊື່, ເດັດດ່ຽວ ແລະ ເວົ້າ ກົ້ງໄປກົ້ງມາ. ລາວຍຶດໝັ້ນໃນສິ່ງທີ່ເຊື່ອວ່າຖືກຕ້ອງ ໂດຍບໍ່ສົນໃຈວ່າຜົນທີ່ຕາມມາຈະເປັນແນວໃດ. ດ້ວຍ ການໃຊ້ວິຈາລະນະຍານອັນແຫຼມຄົມ ລາວບໍ່ໄວ້ວາງໃຈໃນລະບົບວັດວາອາຮາມຂອງພວກນັກບວດ. ລາວ ຈຶ່ງບໍ່ພໍໃຈຫຼາຍເມື່ອລູເທີເຂົ້າສຳນັກນັກບວດໂດຍບໍ່ໄດ້ຮັບອະນຸຍາດ. ສອງປີຜ່ານໄປກວ່າສອງພໍ່ລູກຈະ ຄືນດີກັນ ແຕ່ເຖິງຢ່າງນັ້ນຄວາມຄິດຂອງພໍ່ກໍຍັງບໍ່ປ່ຽນແປງ. *{GC 120.3}*

ການຮ່ຳຮຽນ

ພໍ່ແມ່ຂອງລູເທີເອົາໃຈໃສ່ຢ່າງຫຼວງຫຼາຍໃນການສຶກສາ ແລະ ການອົບຮົມສັ່ງສອນລູກ ໆ. ພວກເພິ່ນ ພະຍາຍາມສອນລູກໃຫ້ຮູ້ຈັກພຣະເຈົ້າ ແລະ ດຳເນີນຊີວິດຕາມຫຼັກສິນທຳຂອງຄຣິສຕຽນ. ລູກຊາຍມັກ ໄດ້ຍິນສຽງອະທິຖານຂອງພໍ່ ທີ່ທູນຂໍໃຫ້ລູກລະນຶກເຖິງພຣະນາມຂອງພຣະຜູ້ເປັນເຈົ້າ ເພື່ອວ່າມື້ໜຶ່ງລູກ ຈະໄດ້ຊ່ວຍເຜີຍແຜ່ຄວາມຈິງຂອງພຣະອົງ. ພໍ່ແມ່ຂອງລູເທີໃຊ້ທຸກໂອກາດເທົ່າທີ່ເຮັດໄດ້ທ່າມກາງຊີວິດທີ່ ລຳບາກ ເພື່ອພັດທະນາດ້ານສິນທຳ ແລະ ສະຕິປັນຍາຂອງລູກ ໆ. ພວກເພິ່ນມີຄວາມພະຍາຍາມ ຢ່າງຈິງຈັງ ແລະ ຕໍ່ເນື່ອງເພື່ອກຽມລູກໃຫ້ມີຊີວິດທີ່ເຕັມໄປດ້ວຍສິນທຳ ແລະ ເປັນປະໂຫຍດ. ຍ້ອນ

ອຸປະນິໄສທີ່ໝັ້ນຄົງ ແລະ ເດັດດ່ຽວນັ້ນ ບາງຄັ້ງການອົບຮົມຈຶ່ງເຂັ້ມງວດເກີນໄປ, ລູເທີເອງຮູ້ວ່າພໍ່ແມ່ໄດ້ຜິດພາດໄປໃນບາງເລື່ອງ ແຕ່ເມື່ອເບິ່ງການອົບຮົມສັ່ງສອນຂອງພວກເພິ່ນແລ້ວ ກໍເຫັນວ່າມີສິ່ງທີ່ໜ້າຍ້ອງຍໍຫຼາຍກວ່າທີ່ຈະຕຳໜິ. {GC 121.1}

ລູເທີໄດ້ຖືກສົ່ງໄປໂຮງຮຽນຕັ້ງແຕ່ອາຍຸຍັງນ້ອຍ ແລະ ຖືກປະຕິບັດຢ່າງໂຫດຮ້າຍທາລຸນ. ພໍ່ແມ່ເພິ່ນທຸກຍາກຫຼາຍ ຈົນເມື່ອໄປຮຽນຢູ່ຕ່າງເມືອງ ເພິ່ນຕ້ອງຫາອາຫານດ້ວຍການຮ້ອງເພງຕາມເຮືອນຊານ ແລະ ຫຼາຍຄັ້ງຕ້ອງທົນກັບຄວາມຫິວ. ແນວຄິດທາງສາສະໜາທີ່ງົມງວາຍ ແລະ ໝົດຫວັງໃນສະໄໝນັ້ນ ເຮັດໃຫ້ເພິ່ນເຕັມໄປດ້ວຍຄວາມຢ້ານກົວ. ໃນຕອນກາງຄືນເພິ່ນນອນລົງດ້ວຍຈິດໃຈທີ່ເສົ້າໝອງ ຄິດເຖິງອະນາຄົດອັນມືດມົນດ້ວຍຈິດໃຈທີ່ສັ່ນສະທ້ານ ແລະ ຢູ່ໃນຄວາມຢ້ານກົວຕະຫຼອດເວລາເມື່ອຄິດວ່າ ພຣະເຈົ້າເປັນພຽງຜູ້ພິພາກສາທີ່ເຂັ້ມງວດ ແລະ ເປັນຜະເດັດການທີ່ໂຫດຮ້າຍ ແທນທີ່ຈະເຫັນພຣະອົງໃນຖານະເປັນພຣະບິດາໃນສະຫວັນຜູ້ເຕັມໄປດ້ວຍຄວາມຮັກ. {GC 121.2}

ເຖິງແມ່ນວ່າມີບັນຫາໃຫຍ່ຫຼາຍຢ່າງທີ່ເຮັດໃຫ້ລູເທີທໍ້ຖອຍ ແຕ່ເພິ່ນຍັງໄດ້ບາກບັ່ນກ້າວໜ້າຢ່າງໝັ້ນຄົງໄປສູ່ມາດຕະຖານອັນສູງສົ່ງດ້ານສິນທຳ ແລະ ສະຕິປັນຍາທີ່ດຶງດູດຈິດໃຈຂອງເພິ່ນ. ເພິ່ນກະຫາຍຄວາມຮູ້, ແລະ ຍ້ອນເປັນຄົນຈິງໃຈ ແລະ ຢູ່ໃນໂລກຄວາມເປັນຈິງ ຈຶ່ງປາຖະໜາສິ່ງທີ່ໜັກແໜ້ນ ແລະ ເປັນປະໂຫຍດ ຫຼາຍກວ່າການສະແດງເອົາໜ້າ ຫຼື ເລື່ອງທີ່ບໍ່ມີສາລະ. {GC 121.3}

ເມື່ອອາຍຸ 18 ປີ ລູເທີເຂົ້າມະຫາວິທະຍາໄລທີ່ເມືອງເອີເຟີດ (Erfurt). ຄາວນີ້ສະພາບການເງິນດີກວ່າ ແລະ ຄວາມຫວັງໃນອະນາຄົດສົດໃສກວ່າຊ່ວງຕອນເປັນເດັກ. ພໍ່ແມ່ປາກກັດຕີນຖີບ ແລະ ອົດອອມເກັບທ້ອນຈົນມີເງິນພໍທີ່ຈະສົ່ງເສຍຄ່າໃຊ້ຈ່າຍຕາມທີ່ລູເທີຕ້ອງການ. ນອກຈາກນັ້ນ, ອິດທິພົນດີຈາກໝູ່ເພື່ອນທີ່ມີສະຕິປັນຍາ ໄດ້ຊ່ວຍບັນເທົາຄວາມມືດມົນທີ່ເກີດຈາກການອົບຮົມໃນອະດີດ. ເພິ່ນໃຊ້ເວລາສຶກສາຄົ້ນຄວ້າໜັງສືຂອງບັນດານັກຂຽນທີ່ດີທີ່ສຸດ ແລະ ເອົາໃຈໃສ່ແນວຄິດທີ່ສຳຄັນຂອງພວກເຂົາຢ່າງຂະຫຍັນໝັ່ນພຽນ ເພື່ອຮັບເອົາປັນຍາຂອງນັກປາດມາເປັນຂອງຕົນເອງ. ເຖິງແມ່ນວ່າກ່ອນໜ້ານີ້ ຄູອາຈານມີວິໄນຢ່າງໂຫດຮ້າຍ ແຕ່ເພິ່ນກໍຍັງສະແດງໃຫ້ເຫັນແວວແຫ່ງຄວາມດີເດັ່ນ. ພາຍໃຕ້ສະພາບແວດລ້ອມທີ່ດີ ສະໝອງຂອງເພິ່ນຈຶ່ງພັດທະນາຢ່າງໄວວາ. ລູເທີມີຄວາມຈຳດີ, ມີຈິນຕະນາການອັນແຈ່ມແຈ້ງ, ມີຄວາມສາມາດຄິດເປັນເຫດເປັນຜົນ ແລະ ເປັນຄົນທີ່ມີຄວາມພະຍາຍາມບໍ່ຮູ້ອິດຮູ້ເມື່ອຍ. ໃນບໍ່ຊ້າເພິ່ນຈຶ່ງຢູ່ອັນດັບຕົ້ນ ໆ ທ່າມກາງນັກສຶກສາລຸ້ນດຽວກັນ. ການໃຊ້ຄວາມຄິດຢ່າງມີວິໄນໄດ້ພັດທະນາຄວາມເຂົ້າໃຈຂອງເພິ່ນ ພ້ອມທັງເຮັດໃຫ້ເພິ່ນມີຄວາມຄິດທີ່ວ່ອງໄວ ແລະ ຄວາມສາມາດໃນການສັງເກດອັນແຫຼມຄົມ ເຊິ່ງເປັນການກຽມຕົວສຳລັບການຕໍ່ສູ້ໃນຊີວິດ. {GC 121.4}

ລູເທີຢຳເກງພຣະເຈົ້າດ້ວຍໃຈ ເຊິ່ງເຮັດໃຫ້ເພິ່ນຮັກສາຄວາມມຸ່ງໝາຍໄວ້ຢ່າງແນ່ວແນ່ ແລະ ນຳພາເພິ່ນໃຫ້ມີຄວາມຖ່ອມໃຈຢ່າງເລິກເຊິ່ງຕໍ່ພຣະເຈົ້າ. ລູເທີຮູ້ສຶກຕະຫຼອດເວລາວ່າເພິ່ນຕ້ອງການໃຫ້ພຣະເຈົ້າຊົງຊ່ວຍເຫຼືອເພິ່ນ, ທຸກເຊົ້າເພິ່ນບໍ່ພາດທີ່ຈະເລີ່ມວັນໃໝ່ດ້ວຍການອະທິຖານ ແລະ ຈະອະທິຖານຢ່າງສະໝ່ຳສະເໝີຕະຫຼອດທັງວັນເພື່ອຂໍການຊົງນຳ ແລະ ການຊ່ວຍຊູຈາກພຣະເຈົ້າ. ເພິ່ນມັກເວົ້າຢູ່ເລື້ອຍ ໆ ວ່າ: “ຫຼາຍກວ່າເຄິ່ງໜຶ່ງຂອງຄວາມສຳເລັດໃນດ້ານການສຶກສາແມ່ນການຮູ້ຈັກອະທິຖານຢ່າງຖືກຕ້ອງ.”[1] {GC 122.1}

[1] ໂດບິນເຍ (D’Aubigné), ເຫຼັ້ມ 2, ບົດ 2.

ພົບພຣະຄຳພີແລ້ວຈຶ່ງພົບພຣະເຢຊູ

ຢູ່ມາມື້ໜຶ່ງໃນຂະນະທີ່ເພິ່ນສຳຫຼວດໜັງສືໃນຫໍສະໝຸດປະຈຳມະຫາວິທະຍາໄລ ລູເທີພົບພຣະຄຳພີສະບັບແປເປັນພາສາລາຕິນເຫຼັ້ມໜຶ່ງ. ເພິ່ນບໍ່ເຄີຍເຫັນໜັງສືແບບນີ້ມາກ່ອນ ແລະ ບໍ່ຮູ້ເລີຍຊ້ຳວ່າ ມີພຣະຄຳພີແບບນີ້ຢູ່ໃນໂລກ. ກ່ອນໜ້ານີ້ເພິ່ນເຄີຍໄດ້ຍິນຄົນອ່ານບາງສ່ວນຂອງພຣະທຳມັດທາຍ, ມາຣະໂກ, ລູກາ, ໂຢຮັນ ແລະ ບາງຕອນຈາກຈົດໝາຍຕ່າງໆ ໃນພຣະຄຳພີໃໝ່, ເພາະມີການອ່ານຂໍ້ຄວາມບາງຕອນໃຫ້ປະຊາຊົນຟັງໃນທີ່ປະຊຸມນະມັດສະການ, ເພິ່ນຈຶ່ງຄິດວ່ານັ້ນຄົງເປັນພຣະຄຳພີທັງໝົດ. ສະນັ້ນ, ນີ້ເປັນຄັ້ງທຳອິດທີ່ເພິ່ນໄດ້ເຫັນພຣະຄຳຂອງພຣະເຈົ້າທັງເຫຼັ້ມ. ຈິດໃຈຂອງລູເທີຮູ້ສຶກຢຳເກງໃນຂະນະດຽວກັນກໍຢາກຮູ້ຢາກເຫັນ ເພິ່ນຈຶ່ງເປີດພຣະຄຳອັນສັກສິດໄປເທື່ອລະໜ້າ ຫົວໃຈເຕັ້ນແຮງເມື່ອອ່ານຖ້ອຍຄຳແຫ່ງຊີວິດດ້ວຍຕົນເອງ. ຫຼາຍຄັ້ງເພິ່ນຢຸດອ່ານແລ້ວອຸທານອອກມາວ່າ: “ໂອ້ ໂຫ ຢາກໃຫ້ພຣະເຈົ້າປະທານໜັງສືແບບນີ້ໃຫ້ຂ້ານ້ອຍດ້ວຍ!”[2] ທູດສະຫວັນຂອງພຣະເຈົ້າຢູ່ຄຽງຂ້າງເພິ່ນ ແລະ ພຣະເຈົ້າປະທານຄວາມສະຫວ່າງໃຫ້ເພິ່ນເຂົ້າໃຈເຖິງຄວາມຈິງອັນລ້ຳຄ່າ. ຕະຫຼອດຊີວິດຂອງລູເທີນັ້ນເພິ່ນຢ້ານວ່າຈະເຮັດໃຫ້ພຣະເຈົ້າໂກດຮ້າຍ, ແຕ່ບັດນີ້ເພິ່ນເຫັນເຖິງສະພາບຂອງຕົນໃນຖານະຄົນບາບຢ່າງທີ່ບໍ່ເຄີຍເຫັນມາກ່ອນ. *{GC 122.2}*

ລູເທີປາຖະໜາຢ່າງແຮງກ້າທີ່ຈະຫຼຸດພົ້ນຈາກຄວາມບາບ ແລະ ພົບສັນຕິສຸກໃນພຣະເຈົ້າ, ໃນທີ່ສຸດເພິ່ນຈຶ່ງເຂົ້າສຳນັກນັກບວດເພື່ອອຸທິດຊີວິດຕາມວິຖີນັ້ນ. ໃນສຳນັກດັ່ງກ່າວເພິ່ນຕ້ອງເຮັດວຽກທີ່ຕ່ຳຕ້ອຍທີ່ສຸດ ແລະ ຕ້ອງອອກໄປບິນທະບາດຕາມເຮືອນຊານຂອງປະຊາຊົນ. ໃນໄວໜຸ່ມທີ່ຕ້ອງການກຽດ ແລະ ການຍອມຮັບຈາກຄົນອື່ນຫຼາຍທີ່ສຸດ ການເຮັດວຽກຕ່ຳຕ້ອຍເຫຼົ່ານີ້ເຮັດໃຫ້ຈິດໃຈຂອງເພິ່ນຮູ້ສຶກອັບອາຍຂາຍໜ້າ. ຢ່າງໃດກໍດີ, ເພິ່ນກໍທຳໃຈອົດທົນຕໍ່ຄວາມອັບອາຍນັ້ນ, ໂດຍເຊື່ອວ່າສິ່ງເຫຼົ່ານີ້ມີຄວາມຈຳເປັນຍ້ອນຄວາມຜິດບາບຂອງຕົນ. *{GC 123.1}*

ລູເທີໃຊ້ທຸກນາທີທີ່ຍາດເອົາໄດ້ຈາກໜ້າທີ່ປະຈຳວັນ ເພື່ອໃຊ້ໃນການສຶກສາຄົ້ນຄວ້າ, ເຖິງຂັ້ນອົດຫຼັບອົດນອນ ແລະ ຮູ້ສຶກເສຍດາຍເວລາທີ່ຕ້ອງກິນອາຫານອັນເລັກໜ້ອຍຂອງຕົນ. ສິ່ງທີ່ເພິ່ນມັກສຶກສາຫຼາຍທີ່ສຸດແມ່ນພຣະຄຳຂອງພຣະເຈົ້າ. ເພິ່ນໄດ້ພົບພຣະຄຳພີເຫຼັ້ມໜຶ່ງຖືກລ່ວມໄສ້ທີ່ຝາຜະໜັງຂອງສຳນັກນັກບວດ ຈຶ່ງໄປອ່ານຢູ່ເລື້ອຍໆ. ຍິ່ງອ່ານລູເທີຍິ່ງຮູ້ສຶກວ່າຕົນເປັນຄົນບາບ, ເພິ່ນຈຶ່ງພະຍາຍາມທຳບຸນເພື່ອລຶບລ້າງຄວາມບາບ ແລະ ເພື່ອຈິດໃຈຈະໄດ້ມີສັນຕິສຸກ. ເພິ່ນພະຍາຍາມດັບກິເລດດ້ວຍການໃຊ້ຊີວິດຢ່າງເຂັ້ມງວດທີ່ສຸດ, ການອົດອາຫານ, ການອົດນອນ ແລະ ການຂ້ຽນຕີຕົນເອງ, ເພາະວ່າຊີວິດນັກບວດທຳມະດາບໍ່ໄດ້ຊ່ວຍໃຫ້ເພິ່ນຫຼຸດພົ້ນໄດ້. ເພິ່ນບໍ່ຫຼີກລ່ຽງການເສຍສະຫຼະ ຖ້າຫາກການເສຍສະຫຼະນັ້ນຈະຊ່ວຍໃຫ້ເພິ່ນມີຈິດໃຈທີ່ບໍຣິສຸດ ແລະ ເຮັດໃຫ້ເພິ່ນເປັນທີ່ຍອມຮັບຂອງພຣະເຈົ້າໄດ້. ຕໍ່ມາລູເທີເວົ້າເຖິງຊ່ວງຊີວິດນີ້ວ່າ: “ຂ້າພະເຈົ້າເປັນນັກບວດທີ່ທຳມະທຳໂມອີ່ຫຼີ ແລະ ປະຕິບັດຕາມສິນທີ່ຄະນະນັກບວດຂອງຂ້າພະເຈົ້າກຳນົດໄວ້ຢ່າງເຂັ້ມງວດເກີນທີ່ຈະບັນລະຍາຍໄດ້. ຖ້າຫາກວ່ານັກບວດສາມາດໄປເຖິງສະຫວັນໄດ້ດ້ວຍການຖືສິນ ຂ້າພະເຈົ້າຄົງໄດ້ສິດຂຶ້ນສະຫວັນແນ່ນອນ; . . . ຖ້າຫາກວ່າຂ້າພະເຈົ້າໄດ້ດຳເນີນຕໍ່ໄປອີກໜ້ອຍດຽວ ກໍຄົງຕາຍຍ້ອນການທໍລະມານຕົນເອງ.”[3] ຜົນຈາກການປະຕິບັດຕົນຢ່າງເຄັ່ງຄັດຈົນເຈັບປວດນັ້ນ ເຮັດໃຫ້ເພິ່ນເສຍກຳລັງວັງຊາ ແລະ ມີອາການເປັນວິນເປັນລົມຢູ່ເລື້ອຍໆ, ເຊິ່ງເປັນຜົນກະທົບທີ່ຕິດຕົວເພິ່ນໄປຕະຫຼອດຊີວິດ. ເຖິງແມ່ນວ່າເພິ່ນຈະພະຍາຍາມທຸກວິຖີທາງແລ້ວກໍຕາມ ແຕ່ຈິດວິນຍານທີ່ແບກ

[2] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 2, ບົດ 2.
[3] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 2, ບົດ 3.

ພາລະໜັກຂອງເພິ່ນກໍບໍ່ໄດ້ຮັບການປົດປ່ອຍແຕ່ຢ່າງໃດ. ໃນທີ່ສຸດເພິ່ນກໍມາເຖິງປາກເຫວແຫ່ງຄວາມສິ້ນຫວັງ. *{GC 123.2}*

ເມື່ອລູເທີຮູ້ສຶກວ່າຕົນໝົດຫົນທາງແລ້ວ ພຣະເຈົ້າຊົງນຳໃຫ້ເພິ່ນຮູ້ຈັກກັບສະເຕົ້າພິດ (Staupitz) ຜູ້ກາຍເປັນທັງເພື່ອນ ແລະ ຜູ້ຊ່ວຍເຫຼືອເພິ່ນ. ສະເຕົ້າພິດ ເປັນຜູ້ຢຳເກງພຣະເຈົ້າ, ເພິ່ນອະທິບາຍພຣະຄຳຂອງພຣະອົງໃຫ້ລູເທີເຂົ້າໃຈ ແລະ ຂໍໃຫ້ລູເທີເຊົາການເບິ່ງແຕ່ຕົວເອງ, ຢຸດຄິດເຖິງການລົງໂທດອັນບໍ່ມີທີ່ສິ້ນສຸດສຳລັບການລະເມີດພຣະບັນຍັດຂອງພຣະເຈົ້າ ແລ້ວຫັນໄປເບິ່ງພຣະເຢຊູ ອົງພຣະຜູ້ຊ່ວຍໃຫ້ລອດຜູ້ຊົງອະໄພຄວາມຜິດບາບຂອງຕົນ. ສະເຕົ້າພິດກ່າວວ່າ: “ແທນທີ່ຈະທໍລະມານຕົນເອງຍ້ອນຄວາມຜິດບາບທີ່ໄດ້ກະທຳ ຈົ່ງແລ່ນໄປທີ່ອ້ອມກອດຂອງພຣະຜູ້ໄຖ່. ຈົ່ງໄວ້ວາງໃຈໃນພຣະອົງ, ໃນຄວາມຊອບທຳແຫ່ງຊີວິດຂອງພຣະອົງ ແລະ ໃນການສິ້ນພຣະຊົນຂອງພຣະອົງທີ່ນຳໃຫ້ພວກເຮົາຄືນດີກັບພຣະເຈົ້າ; . . . ຈົ່ງຟັງພຣະບຸດຂອງພຣະເຈົ້າ. ພຣະອົງຊົງບັງເກີດເປັນມະນຸດເພື່ອຢືນຢັນໃຫ້ເຈົ້າຮູ້ວ່າພຣະເຈົ້າຊົງໂຜດມະນຸດ.” “ຈົ່ງຮັກພຣະອົງຜູ້ທີ່ຊົງຮັກເຈົ້າກ່ອນ.”[4] ຖ້ອຍຄຳຂອງສະເຕົ້າພິດທີ່ເພິ່ນກ່າວເພື່ອສື່ສານເຖິງພຣະເມດຕາຂອງພຣະເຈົ້າ ໄດ້ເຂົ້າໄປເຖິງສ່ວນເລິກຂອງຈິດໃຈລູເທີ. ຫຼັງຈາກຕໍ່ສູ້ກັບຄວາມເຂົ້າໃຈຜິດທີ່ຍຶດຖືມາດົນນານ, ລູເທີກໍສາມາດເຂົ້າໃຈຄວາມຈິງໃນທີ່ສຸດ, ແລ້ວສັນຕິສຸກຈຶ່ງມາແທນທີ່ຄວາມອຸກອັ່ງໃຈ. *{GC 123.3}*

ຈຸດຫັກເຫ

ລູເທີໄດ້ຮັບການເຈີມຕັ້ງເປັນບາດຫຼວງ ແລະ ຖືກຍົກຍ້ອງໃຫ້ອອກຈາກສຳນັກນັກບວດໄປເປັນສາດສະດາຈານປະຈຳມະຫາວິທະຍາໄລແຫ່ງເມືອງວິດເທັນເບີກ (Wittenberg). ທີ່ນີ້ເພິ່ນໃຊ້ເວລາສຶກສາພຣະຄຳພີໃນພາສາດັ້ງເດີມ ແລະ ເລີ່ມບັນລະຍາຍເຖິງພຣະຄຳພີໃຫ້ຄົນຟັງ. ເພິ່ນອະທິບາຍພຣະທຳເພງສັນລະເສີນ, ໜັງສືພຣະກິດຕິຄຸນ ແລະ ຈົດໝາຍຕ່າງ ໆ ໃນພຣະຄຳພີໃໝ່ໃຫ້ຝູງຊົນທີ່ລໍຟັງດ້ວຍຄວາມດີອົກດີໃຈ. ສະເຕົ້າພິດໃນຖານະເພື່ອນ ແລະ ຜູ້ມີຕຳແໜ່ງສູງກວ່າ ໄດ້ສົ່ງເສີມໃຫ້ລູເທີຂຶ້ນທຳມາດເພື່ອເທດສະໜາປະກາດພຣະຄຳຂອງພຣະເຈົ້າ. ແຕ່ລູເທີລັງເລ ເພາະຮູ້ສຶກວ່າຕົນບໍ່ຄູ່ຄວນທີ່ຈະເປັນຜູ້ກ່າວແທນພຣະຄຣິສໃນການປະກາດພຣະທຳໃຫ້ປະຊາຊົນຟັງ. ເພິ່ນຕໍ່ສູ້ກັບຕົນເອງເປັນເວລາດົນ ກວ່າຈະຍອມເຮັດຕາມຄຳແນະນຳຂອງໝູ່ເພື່ອນ. ໃນຊ່ວງນີ້ເພິ່ນມີຄວາມຊຳນານໃນພຣະຄຳພີແລ້ວ ແລະ ພຣະຄຸນຂອງພຣະເຈົ້າຢູ່ກັບເພິ່ນ. ການທີ່ລູເທີເວົ້າຢ່າງລ່ຽນໄຫຼນັ້ນເປັນທີ່ຈັບໃຈຂອງຜູ້ຟັງ, ເພິ່ນອະທິບາຍຢ່າງຊັດເຈນ ແລະ ມີພະລັງ, ເຮັດໃຫ້ຄົນຟັງເຂົ້າໃຈ ແລະ ຍອມຮັບຄວາມຈິງ, ສ່ວນຄວາມກະຕືລືລົ້ນຂອງເພິ່ນກໍເຮັດໃຫ້ພວກເຂົາຊາບຊຶ້ງ. *{GC 124.1}*

ໃນເວລານັ້ນ ລູເທີຍັງເປັນສາວົກທີ່ສັດຊື່ຂອງຄຣິສຕະຈັກໃນລະບອບສັນຕະປາປາ ແລະ ບໍ່ຄິດບໍ່ຝັນວ່າຈະມີວັນໜຶ່ງທີ່ຈະເປັນຢ່າງອື່ນ. ພຣະເຈົ້າຊົງນຳໃຫ້ເພິ່ນມີໂອກາດໄປຢ້ຽມຢາມນະຄອນໂຣມ, ເພິ່ນຈຶ່ງອອກເດີນທາງດ້ວຍການຍ່າງ ແລະ ພັກໃນສຳນັກນັກບວດຢູ່ລະຫວ່າງທາງ. ໃນສຳນັກນັກບວດແຫ່ງໜຶ່ງໃນອິຕາລີ ເພິ່ນຕົກຕະລຶງທີ່ເຫັນຄວາມຫຼູຫຼາຮົ່ງມີ ແລະ ຄວາມຟຸມເຟືອຍ. ພວກນັກບວດທີ່ນັ້ນມີລາຍຮັບເໝືອນເປັນຂຸນນາງ ແລະ ອາໄສໃນອາຄານທີ່ຕົບແຕ່ງໄວ້ຢ່າງງົດງາມ, ນຸ່ງເຄື່ອງທີ່ລ້ຳຄ່າທີ່ສຸດ ແລະ ກິນລ້ຽງກັນຢ່າງອີ່ມໜຳສຳລານ. ເພິ່ນຮູ້ສຶກເຈັບປວດໃນໃຈເມື່ອປຽບທຽບສິ່ງທີ່ເຫັນ ກັບການປະຕິເສດຕົນເອງ ແລະ ຄວາມລຳບາກໃນຊີວິດຂອງຕົນ, ຍິ່ງຄິດກໍຍິ່ງສັບສົນ. *{GC 124.2}*

ໃນທີ່ສຸດ ເພິ່ນກໍໄດ້ເຫັນນະຄອນໂຣມແຕ່ໄກ ຄືນະຄອນທີ່ຕັ້ງຢູ່ເທິງເນີນພູເຈັດໜ່ວຍ. ດ້ວຍຄວາມຮູ້ສຶກສະເທືອນໃຈຢ່າງເລິກເຊິ່ງ ເພິ່ນໄດ້ຂາບລົງກັບພື້ນດິນ ແລະ ຮ້ອງອອກມາວ່າ: “ນະຄອນ

[4] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 2, ບົດ 4.

ໂຣມອັນສັກສິດເອີຍ, ຂ້ານ້ອຍຂໍຄຳນັບເຈົ້າ!”[5] ເພິ່ນໄດ້ເຂົ້າໄປໃນນະຄອນ, ໄປຢ້ຽມຢາມໂບດວິຫານ ຕ່າງໆ, ໄດ້ຟັງເລື່ອງແປກປະຫຼາດທີ່ພວກບາດຫຼວງ ແລະ ພວກນັກບວດເລົ່າ ແລະ ໄດ້ເຮັດທຸກ ພິທີກຳທີ່ກຳນົດໄວ້. ແຕ່ລະບ່ອນທີ່ເພິ່ນເບິ່ງໄປ ກໍພົບເຫັນແຕ່ສິ່ງທີ່ເຮັດໃຫ້ເພິ່ນຕົກໃຈຢ້ານ. ລູເທີ ເຫັນວ່ານັກບວດ ແລະ ບາດຫຼວງໃນທຸກລະດັບຊັ້ນລ້ວນແຕ່ມີຄົນເຮັດຊົ່ວ. ເພິ່ນໄດ້ຍິນເລື່ອງຕະຫຼົກ ຫຍາບຄາຍຈາກພວກຜູ້ນຳຄຣິສຕະຈັກ ແລະ ຮູ້ສຶກຕົກໃຈກັບຄຳເວົ້າໝິ່ນປະໝາດຢ່າງຊົ່ວຮ້າຍຂອງ ພວກເຂົາ ແມ່ນແຕ່ໃນເວລາປະກອບພິທີສິນລະນຶກ. ເມື່ອເພິ່ນເຂົ້າໆ ອອກໆຢູ່ທ່າມກາງພວກ ນັກບວດ ແລະ ປະຊາຊົນ ລູເທີພົບເຫັນຄວາມມືດມົ້ວເສເພ. ບໍ່ວ່າຈະຫັນໄປທາງໃດ ແທນທີ່ຈະ ເຫັນຄວາມບໍຣິສຸດດີງາມ ກໍເຫັນການປະໝາດຕໍ່ສິ່ງສັກສິດ. ເພິ່ນຂຽນວ່າ: “ບໍ່ມີໃຜຄາດຄິດໄດ້ວ່າມີ ຄວາມບາບ ແລະ ການກະທຳທີ່ໜ້າອັບອາຍຫຼາຍປານໃດທີ່ເກີດຂຶ້ນໃນນະຄອນໂຣມ. ຕ້ອງໄດ້ເຫັນ ກັບຕາ ແລະ ໄດ້ຍິນກັບຫູຕົນເອງຈຶ່ງຈະເຊື່ອໄດ້. ດັ່ງນັ້ນ, ພວກເຂົາຈຶ່ງມັກເວົ້າກັນວ່າ: ‘ຖ້າມີນະຣົກ ຈິງ ນະຄອນໂຣມກໍຖືກສ້າງຂຶ້ນຢູ່ເທິງນະຣົກນັ້ນ. ມັນເປັນເຫວເລິກທີ່ເປັນບໍ່ເກີດຂອງຄວາມຜິດບາບທຸກ ຊະນິດ.’”[6] *{GC 124.3}*

ກ່ອນໜ້ານັ້ນບໍ່ດົນມີຄຳປະກາດຂອງສັນຕະປາປາວ່າ ຈະຍົກຄວາມບາບໃຫ້ທຸກຄົນທີ່ໃຊ້ຫົວ ເຂົ່າຄານຂຶ້ນ “ຂັ້ນໄດຂອງປີລາດ.” ພວກເຂົາເວົ້າກັນວ່າ ເປັນຂັ້ນໄດດຽວກັນທີ່ພຣະຜູ້ຊ່ວຍໃຫ້ລອດ ສະເດັດລົງ ເມື່ອອອກຈາກຫ້ອງພິພາກສາຂອງປີລາດ ແລະ ຖືກນຳມາຈາກນະຄອນເຢຣູຊາເລັມມາ ເຖິງນະຄອນໂຣມຢ່າງອັດສະຈັນ. ລູເທີກຳລັງຄານຂຶ້ນຂັ້ນໄດດັ່ງກ່າວດ້ວຍຄວາມເຫຼື້ອມໃສສັດທາ ໃນ ທັນໃດນັ້ນເໝືອນມີສຽງດັງຄ້າຍຄືກັບສຽງຟ້າຮ້ອງກ່າວແກ່ເພິ່ນວ່າ: “ຄົນຊອບທຳຈະດຳລົງຊີວິດໂດຍ ຄວາມເຊື່ອ.” (ໂຣມ 1:17 TNCV). ເພິ່ນຈຶ່ງຟ້າວລຸກຂຶ້ນ ແລ້ວແລ່ນໜີອອກຈາກທີ່ນັ້ນດ້ວຍຄວາມ ອັບອາຍ ແລະ ຄວາມຕົກໃຈ. ຕັ້ງແຕ່ນັ້ນມາ ຂໍ້ພຣະຄຳພີຂໍ້ນີ້ມີພະລັງຣິດເດດໃນໃຈຂອງເພິ່ນຢ່າງ ບໍ່ເສື່ອມຄາຍ. ນັບແຕ່ນັ້ນມາ ເພິ່ນເຫັນຢ່າງຈະແຈ້ງວ່າ ການຫວັງເພິ່ງບຸນກຸສົນຂອງມະນຸດເພື່ອຈະ ໄດ້ລອດພົ້ນນັ້ນເປັນຄວາມເຂົ້າໃຈຜິດ ແຕ່ຄວາມລອດນັ້ນ ມາດ້ວຍການເຊື່ອວາງໃຈຢ່າງຕໍ່ເນື່ອງໃນ ຄຸນຄວາມດີຂອງພຣະຄຣິສ. ບັດນີ້ຕາຂອງເພິ່ນໄດ້ຖືກເປີດອອກໃຫ້ເຫັນການຫຼອກລວງຂອງລະບອບ ສັນຕະປາປາ ແລະ ຈະບໍ່ມີວັນປິດລົງອີກ. ເມື່ອເພິ່ນຫັນໜ້າຈາກນະຄອນໂຣມ ຈິດໃຈຂອງເພິ່ນກໍຫັນ ໄປດ້ວຍ ແລະ ນັບແຕ່ນັ້ນມາເພິ່ນກໍຫ່າງອອກຈາກຄຣິສຕະຈັກໂຣມໄປເລື້ອຍໆ ຈົນໃນທີ່ສຸດເພິ່ນໄດ້ຕັດ ຂາດຢ່າງສິ້ນເຊີງຈາກຄຣິສຕະຈັກທີ່ມີສັນຕະປາປາເປັນປະມຸກ. *{GC 125.1}*

ລູເທີປະກາດພຣະທຳ

ຫຼັງຈາກລູເທີກັບຈາກການຢ້ຽມຢາມນະຄອນໂຣມ ມະຫາວິທະຍາໄລແຫ່ງເມືອງວິດເທັນເບີກໄດ້ໃຫ້ ປະລິນຍາເອກດ້ານສາສະໜາສາດແກ່ເພິ່ນ. ບັດນີ້ເພິ່ນຈຶ່ງມີອິດສະຫຼະທີ່ຈະຄົ້ນຄວ້າພຣະຄຳພີທີ່ເພິ່ນ ຮັກຢ່າງທີ່ບໍ່ເຄີຍມີໂອກາດມາກ່ອນ. ເພິ່ນໄດ້ປະຕິຍານຕົນວ່າຈະສຶກສາພຣະຄຳຂອງພຣະເຈົ້າຢ່າງ ລະອຽດ ແລະ ຈະເທດສະໜາພຣະຄຳນັ້ນຢ່າງສັດຊື່ຕະຫຼອດຊີວິດທີ່ເຫຼືອຢູ່ ແຕ່ຈະບໍ່ເທດສະໜາຄຳ ກ່າວ ຫຼື ຄຳສອນຂອງສັນຕະປາປາ. ບັດນີ້ເພິ່ນບໍ່ແມ່ນພຽງນັກບວດ ຫຼື ສາດສະດາຈານຢ່າງດຽວ ແຕ່ ເປັນຜູ້ທີ່ໄດ້ຮັບການແຕ່ງຕັ້ງເພື່ອປະກາດພຣະຄຳພີ. ເພິ່ນໄດ້ຮັບການຍົກເອີ້ນໃຫ້ເປັນຜູ້ລ້ຽງຝູງແກະ ຂອງພຣະເຈົ້າທີ່ກຳລັງຫິວກະຫາຍຄວາມຈິງ. ລູເທີປະກາດຢ່າງໜັກແໜ້ນວ່າ ຄຣິສຕຽນບໍ່ຄວນຮັບ

[5] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 2, ບົດ 6.
[6] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 2, ບົດ 6.

ຄຳສອນອັນໃດເລີຍທີ່ພຣະຄຳພີບໍ່ຮັບຮອງ. ຄຳປະກາດນີ້ກະທົບຕໍ່ຮາກຖານຂອງລະບອບສັນຕະປາປາ ໂດຍກົງ ແລະ ເປັນແກ່ນສານສຳຄັນຂອງຂະບວນການປະຕິຮູບສາສະໜາຄັ້ງໃຫຍ່ນັ້ນ. *{GC 125.2}*

ລູເທີເຫັນວ່າການຍົກເອົາທິດສະດີຂອງມະນຸດເໜືອພຣະຄຳຂອງພຣະເຈົ້າເປັນສິ່ງທີ່ອັນຕະລາຍ. ເພິ່ນຈຶ່ງໂຈມຕີຄຳສອນຂອງພວກນັກວິຊາການທີ່ຊວນໃຫ້ສົງໄສພຣະເຈົ້າ ແລະ ຕໍ່ຕ້ານຫຼັກປັດຊະຍາກັບຫຼັກສາສະໜາສາດທີ່ຄອບງຳປະຊາຊົນມາດົນນານ. ເພິ່ນປະນາມວິຊາເຫຼົ່ານີ້ວ່າບໍ່ພຽງແຕ່ບໍ່ມີປະໂຫຍດຫຍັງເລີຍ ແຕ່ຍັງເປັນພິດເປັນໄພຕໍ່ຜູ້ທີ່ສຶກສາ. ລູເທີພະຍາຍາມຫັນຄວາມຄິດຂອງຜູ້ຟັງອອກຈາກຄຳສອນທຸງມເທັດຂອງພວກນັກປັດຊະຍາ ແລະ ພວກນັກສາສະໜາສາດ ໃຫ້ມາສົນໃຈໃນຄວາມຈິງອັນເປັນນິຣັນທີ່ພວກຜູ້ເຜີຍພຣະທຳ ແລະ ພວກອັກຄະສາວົກໄດ້ສອນໄວ້. *{GC 126.1}*

ປະຊາຊົນຮັບຟັງຂ່າວປະເສີດທີ່ລູເທີປະກາດຢ່າງໃຈຈົດໃຈຈໍ່. ພວກເຂົາບໍ່ເຄີຍໄດ້ຍິນຄຳສອນແບບນີ້ມາກ່ອນ. ປະຊາຊົນຊົມຊື່ນຍິນດີ ທີ່ໄດ້ຍິນຂ່າວປະເສີດເລື່ອງຄວາມຮັກຂອງພຣະຜູ້ຊ່ວຍໃຫ້ລອດ ກັບຖ້ອຍຄຳທີ່ຢືນຢັນວ່າ ພຣະອົງຊົງໃຫ້ອະໄພຄວາມບາບ ແລະ ຊົງໃຫ້ສັນຕິສຸກຜ່ານພຣະໂລຫິດຂອງພຣະອົງ ທີ່ນຳໃຫ້ພວກເຂົາຄືນດີກັບພຣະເຈົ້າ; ສິ່ງເຫຼົ່ານີ້ເຮັດໃຫ້ຜູ້ຟັງມີຄວາມຫວັງໃນຊີວິດນິຣັນ. ແສງປະທີບໄດ້ຈູດຂຶ້ນທີ່ເມືອງວິດເທັນເບີກ ເຊິ່ງຈະສ່ອງໄປຍັງທີ່ສຸດປາຍແຜ່ນດິນໂລກ ແລະ ຈະສະຫວ່າງຂຶ້ນຢ່າງຕໍ່ເນື່ອງຈົນເຖິງວັນອະວະສານ. *{GC 126.2}*

ແຕ່ຄວາມສະຫວ່າງກັບຄວາມມືດບໍ່ສາມາດເຂົ້າກັນໄດ້. ລະຫວ່າງຄວາມຈິງກັບຄວາມເທັດມີການຕໍ່ສູ້ທີ່ບໍ່ສາມາດລະງັບໄດ້. ການສະໜັບສະໜູນ ແລະ ການປົກປ້ອງຝ່າຍໜຶ່ງ ຍ່ອມໝາຍເຖິງການໂຈມຕີ ແລະ ການລົ້ມລ້າງອີກຝ່າຍໜຶ່ງ. ພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາຊົງກ່າວດ້ວຍພຣະອົງເອງວ່າ: “ເຮົາບໍ່ໄດ້ມາເພື່ອນຳຄວາມສະຫງົບສຸກມາໃຫ້ ແຕ່ໃຫ້ມີດາບ.” (ມັດທາຍ 10:34). ສ່ວນລູເທີນັ້ນໄດ້ກ່າວໄວ້ຫຼັງຈາກເລີ່ມການປະຕິຮູບໄດ້ສອງສາມປີວ່າ: “ພຣະເຈົ້າບໍ່ໄດ້ຊົງນຳພາຂ້າພະເຈົ້າ ແຕ່ພຣະອົງຊົງຜັກດັນຂ້າພະເຈົ້າໄປຂ້າງໜ້າ ແລະ ຊົງພາຂ້າພະເຈົ້າໄປ. ຂ້າພະເຈົ້າບໍ່ໄດ້ເປັນນາຍຂອງຕົນເອງ. ໃນສ່ວນຕົວຂ້າພະເຈົ້າຢາກຢູ່ຢ່າງສະຫງົບ ແຕ່ຂ້າພະເຈົ້າຖືກໂຍນເຂົ້າໄປໃນທ່າມກາງຄວາມວຸ້ນວາຍ ແລະ ການປະຕິວັດ.”[7] ບັດນີ້ເພິ່ນກຳລັງຈະຖືກເລັ່ງລັດໃຫ້ເຂົ້າສູ່ການຕໍ່ສູ້. *{GC 126.3}*

ໃບລ້າງບາບ

ຄຣິສຕະຈັກໂຣມກາຍເປັນຄຣິສຕະພານິດທີ່ຕັ້ງພຣະຄຸນຂອງພຣະເຈົ້າເປັນສິນຄ້າ. ໂຕ๊ະຂອງຄົນແລກປ່ຽນເງິນ[8] ຖືກຕັ້ງໄວ້ຂ້າງແທ່ນປະກອບພິທີ ແລະ ມີສຽງໂຮ່ຮ້ອງຕະໂກນຂອງຄົນຊື້ຂາຍດັງກ້ອງໄປທົ່ວໂບດ. ສັນຕະປາປາອະນຸຍາດໃຫ້ມີການຂາຍໃບລ້າງບາບຢ່າງເປີດເຜີຍ ໂດຍອ້າງວ່າເປັນການຫາເງິນສຳລັບການກໍ່ສ້າງໂບດນັກບຸນເປໂຕ (St. Peter’s Church) ທີ່ນະຄອນໂຣມ. ພວກເຂົາຈະສ້າງພຣະວິຫານເພື່ອນະມັດສະການພຣະເຈົ້າດ້ວຍເງິນຄ່າບາບ ແລະ ຈະໃຊ້ຄ່າຈ້າງແຫ່ງຄວາມຊົ່ວໃນການວາງຫີນເສົາເອກ! ແຕ່ວິທີການທີ່ຄຣິສຕະຈັກໂຣມໃຊ້ເພື່ອຂະຫຍາຍອຳນາດນັ້ນ ພັດກາຍເປັນເຫດໃຫ້ອຳນາດ ແລະ ຄວາມຍິ່ງໃຫຍ່ຂອງລະບອບສັນຕະປາປາຖືກໂຈມຕີຢ່າງຮ້າຍແຮງທີ່ສຸດ. ມັນໄດ້ປຸກສັດຕູທີ່ແຂງແກ່ນ ຜູ້ທີ່ປະສົບຜົນສຳເລັດຫຼາຍທີ່ສຸດໃນການຕໍ່ຕ້ານລະບອບສັນຕະປາປາໃຫ້ລຸກຂຶ້ນຕໍ່ສູ້, ເຊິ່ງນຳໄປສູ່ການຕໍ່ສູ້ທີ່ສະເທືອນບັນລັງຂອງສັນຕະປາປາ ແລະ ເປັນເຫດໃຫ້ມົງກຸດສາມຊັ້ນຂອງເພິ່ນສັ່ນຄອນ. *{GC 127.1}*

---

[7] ໂດບິນເຍ, ເຫຼັ້ມ 5, ບົດ 2.

[8] ເບິ່ງ ມັດທາຍ 21:12.

ເຈົ້າໜ້າທີ່ທີ່ໄດ້ຮັບການແຕ່ງຕັ້ງເພື່ອຂາຍໃບລ້າງບາບໃນປະເທດເຢຍລະມັນຊື່ວ່າເທັດເຊັນ (Tetzel). ລາວເຄີຍຖືກສານຕັດສິນໃນຄວາມຜິດທີ່ຕໍ່າຊ້າທີ່ສຸດ ເຊິ່ງລາວໄດ້ເຮັດຕໍ່ສັງຄົມ ແລະ ຕໍ່ພຣະບັນຍັດ ຂອງພຣະເຈົ້າ ແຕ່ໜີໂທດໄດ້ ຈຶ່ງຖືກຈ້າງໃນໂຄງການຂອງສັນຕະປາປາທີ່ສະແຫວງການຂະຫຍາຍ ອຳນາດ ໂດຍບໍ່ສົນໃຈຫຼັກສິນທຳ. ລາວປັ້ນເລື່ອງຄວາມເທັດຢ່າງໜ້າດ້ານ ແລະ ແຕ່ງນິຍາຍເພີ້ຝັນ ເພື່ອຫຼອກລວງປະຊາຊົນທີ່ງົມງວາຍ, ຫົວອ່ອນ ແລະ ຂາດຄວາມຮູ້. ຖ້າປະຊາຊົນມີພຣະຄຳ ຂອງພຣະເຈົ້າ ພວກເຂົາຈະບໍ່ໄດ້ຖືກຫຼອກລວງ. ສະນັ້ນ, ເພື່ອຄວບຄຸມພວກເຂົາໄວ້ໃຕ້ອຳນາດຂອງ ລະບອບສັນຕະປາປາ ແລະ ເພື່ອເພີ່ມອຳນາດບາລະມີ ແລະ ຊັບສິນຂອງພວກຜູ້ນຳທີ່ມີແຕ່ຄວາມ ທະເຍີທະຍານ, ພຣະຄຳພີຈຶ່ງຖືກປິດບັງໄວ້ຈາກປະຊາຊົນ.[9] *{GC 127.2}*

ເມື່ອ ເທັດເຊັນ ເຂົ້າໄປໃນເມືອງໃດເມືອງໜຶ່ງ ກໍຈະມີຄົນເດີນປະກາດໄປຂ້າງໜ້າວ່າ: “ພຣະຄຸນ ຂອງພຣະເຈົ້າ ແລະ ຂອງພຣະສັນຕະປາປາພຣະບິດານັ້ນ ໄດ້ມາເຖິງປະຕູເມືອງຂອງພວກເຈົ້າ ແລ້ວ.”[10] ແລ້ວປະຊາຊົນກໍຕ້ອນຮັບນັກສວມຮອຍທີ່ໝິ່ນປະໝາດນັ້ນເໝືອນດັ່ງວ່າ ອົງພຣະຜູ້ເປັນເຈົ້າ ສະເດັດຈາກສະຫວັນລົງມາຫາພວກເຂົາ. ມີການຂາຍໃບລ້າງບາບຢ່າງໜ້າລະອາຍໃນໂບດ; ເທັດເຊັນ ກໍຂຶ້ນທຳນາດ ແລະ ບັນລະຍາຍເຖິງໃບລ້າງບາບນັ້ນວ່າ ເປັນຂອງປະທານທີ່ລ້ຳຄ່າທີ່ສຸດຈາກ ພຣະເຈົ້າ. ລາວປະກາດວ່າ ຄົນທີ່ຊື້ໃບລ້າງບາບຂອງລາວ ຈະໄດ້ຮັບການຍົກໂທດບາບທີ່ຢາກເຮັດໃນ ອະນາຄົດ ໂດຍ “ບໍ່ຕ້ອງກັບໃຈເລີຍ.”[11] ຍິ່ງໄປກວ່ານັ້ນ, ລາວຍືນຢັນໃຫ້ຄົນຟັງວ່າ ໃບລ້າງບາບບໍ່ພຽງ ແຕ່ຈະຊ່ວຍຄົນເປັນໃຫ້ລອດພົ້ນເທົ່ານັ້ນ ແຕ່ຍັງສາມາດຊ່ວຍຄົນຕາຍໄດ້ດ້ວຍ, ຄືໃນວິນາທີທີ່ຫຼຽນດັງ ປິ່ງປັ່ງປິ່ງປັ່ງໃນຫີບຮັບເງິນ ດວງວິນຍານຂອງຄົນຕາຍທີ່ມີຄົນຊື້ໃບລ້າງບາບເພື່ອນັ້ນ ຈະຫຼຸດພົ້ນຈາກ ແດນຊຳລະບາບຂຶ້ນໄປສູ່ສະຫວັນ.[12] *{GC 127.3}*

ເມື່ອ ຊີໂມນ ຜູ້ເປັນໝໍມົນ ຂໍຊື້ພະລັງຣິດເດດ ຈາກ ພວກ ອັກຄະສາວົກ ເພື່ອ ຈະ ສາມາດ ເຮັດ ການ ອັດສະຈັນໄດ້, ເປໂຕໄດ້ຕອບລາວວ່າ: “ຈົ່ງໃຫ້ເງິນຂອງເຈົ້າຈິບຫາຍໄປກັບເຈົ້າສາ ເພາະເຈົ້າຄິດວ່າຈະຊື້ ຂອງປະທານຈາກພຣະເຈົ້າດ້ວຍເງິນ.” (ກິດຈະການ 8:20). ຢ່າງໃດກໍຕາມ, ມີຫຼາຍພັນຄົນຟ້າວຊື້ໃບ ລ້າງບາບຂອງເທັດເຊັນ. ເງິນຄຳໄດ້ຫຼັ່ງໄຫຼເຂົ້າສູ່ຄັງເງິນຂອງລາວ. ປະຊາຊົນຮູ້ສຶກວ່າ ຄວາມລອດພົ້ນ ທີ່ສາມາດຊື້ດ້ວຍເງິນນັ້ນ ງ່າຍກວ່າຄວາມລອດທີ່ຕ້ອງກັບໃຈເຊື່ອ ແລະ ໃຊ້ຄວາມພຽນພະຍາຍາມໃນ ການຕໍ່ສູ້ ເພື່ອເອົາຊະນະຄວາມບາບ. *{GC 128.1}*

ຄຳສອນເລື່ອງໃບລ້າງບາບໄດ້ຖືກຕໍ່ຕ້ານໂດຍຄົນທີ່ມີສິນທຳ ແລະ ການສຶກສາໃນຄຣິສຕະຈັກໂຣມ. ມີ ຫຼາຍຄົນທີ່ບໍ່ເຊື່ອໃນຄຳໂຄສະນາທີ່ຂັດກັບເຫດຜົນ ແລະ ບໍ່ມີຄຳສອນໃນພຣະຄຳພີຮອງຮັບ. ແຕ່ບໍ່ມີ ຜູ້ນຳຄຣິສຕະຈັກຄົນໃດກ້າປະກາດຕໍ່ຕ້ານການຄ້າອັນຊົ່ວຮ້າຍນີ້. ເຖິງຢ່າງໃດກໍຕາມ, ປະຊາຊົນເລີ່ມ ຮູ້ສຶກບໍ່ສະບາຍໃຈ. ຫຼາຍຄົນຖາມຂຶ້ນດ້ວຍຄວາມຮ້ອນຮົນວ່າ ພຣະເຈົ້າຈະຊົງນຳໃຊ້ຜູ້ໃດໜໍ ເພື່ອຊຳລະ ຄຣິສຕະຈັກຂອງພຣະອົງ. *{GC 128.2}*

ເຖິງແມ່ນວ່າລູເທີຈະຍັງປະຕິບັດຕົວຢູ່ໃນລະບອບສັນຕະປາປາຢ່າງເຂັ້ມງວດ ແຕ່ເພີ່ນຮູ້ສຶກຕົກໃຈ ຢ້ານກັບການໝິ່ນປະໝາດພຣະເຈົ້າຂອງພວກທີ່ຂາຍໃບລ້າງບາບ. ມີສະມາຊິກຄຣິສຕະຈັກຂອງເພີ່ນ ຫຼາຍຄົນໄດ້ຊື້ໃບລ້າງບາບ ແລະ ບໍ່ດົນກໍມາສາລະພາບຄວາມຜິດບາບໃຫ້ລູເທີຟັງໃນຖານະທີ່ເພີ່ນ ເປັນບາດຫຼວງປະຈຳໂບດ. ພວກເຂົາຫວັງວ່າເພີ່ນຈະປະກາດວ່າຄວາມບາບຂອງຕົນໄດ້ຮັບການອະໄພ

[9] ອ່ານ ຈອນ ຊີ. ແອວ. ກີສະເລີ (John C. L. Gieseler), *ປະຫວັດສາດຄຣິສຕະຈັກໂດຍສັງເຂບ*, ພາກ 4, ໝວດ 1, ວັກ 5.

[10] ໂດບິນເຍ, ເຫຼັ້ມ 3, ບົດ 1.

[11] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 3, ບົດ 1.

[12] ອ່ານ ເຄ. ອາ. ຮາເກັນບາກ (K. R. Hagenbach), *ປະຫວັດການປະຕິຮູບສາສະໜາ*, ເຫຼັ້ມ 1, ໜ້າ 96.

ແລ້ວ ບໍ່ແມ່ນຍ້ອນມີການສຳນຶກຜິດ ແລະ ຢາກປ່ຽນແປງຊີວິດ ແຕ່ເພາະວ່າມີໃບລ້າງບາບ. ລູເທີ ປະຕິເສດທີ່ຈະປະກາດວ່າພວກເຂົາໄດ້ຮັບການອະໄພແລ້ວ ແລະ ເຕືອນເຂົາທັງຫຼາຍວ່າ ຖ້າບໍ່ ກັບໃຈ ແລະ ປ່ຽນແປງຊີວິດ ກໍຈະພິນາດໃນຄວາມບາບ. ສະມາຊິກເຫຼົ່ານັ້ນໄດ້ກັບໄປຫາເທັດເຊັນດ້ວຍ ຄວາມສັບສົນໃນໃຈ ແລະ ຈົ່ມໃຫ້ລາວຟັງວ່າ ບາດຫຼວງຂອງພວກເຂົາບໍ່ຍອມຮັບໃບລ້າງບາບ. ບາງຄົນ ຍັງຮຸກຮ້ອງຢ່າງແຂງຂັນໃຫ້ລາວຄືນເງິນ. ພຣະກາໂຕລິກຜູ້ນີ້ຄຸງດແຄ້ນຫຼາຍ ແລະ ກ່າວຄຳສາບແຊ່ງ ທີ່ໜ້າຢ້ານກົວທີ່ສຸດ. ລາວໃຫ້ຄົນຈູດໄຟຢູ່ເດີ່ນເມືອງ ແລະ ປະກາດວ່າຕົນ “ໄດ້ຮັບຄຳສັ່ງຈາກ ສັນຕະປາປາ ໃຫ້ເຜົາຄົນນອກຮີດທຸກຄົນທີ່ກ້າຕໍ່ຕ້ານໃບລ້າງບາບອັນສັກສິດຂອງເພິ່ນ.”[13] *{GC 128.3}*

ບັດນີ້ລູເທີຈຶ່ງກ້າວສູ່ວຽກງານປະກາດຄວາມຈິງດ້ວຍຄວາມກ້າຫານ. ເພິ່ນຢືນຕັກເຕືອນໃນທຳມາດ ດ້ວຍສຽງທີ່ໜັກແໜ້ນ ແລະ ຈິງຈັງ. ລູເທີອະທິບາຍໃຫ້ປະຊາຊົນຟັງວ່າ ຄວາມບາບເປັນສິ່ງທີ່ໜ້າ ກຽດຊັງໃນສາຍພຣະເນດຂອງພຣະເຈົ້າ ພ້ອມທັງສອນພວກເຂົາວ່າ ມະນຸດບໍ່ສາມາດທຳບຸນເພື່ອຫຼຸດ ຜ່ອນຄວາມຜິດ ຫຼື ພົ້ນການລົງໂທດໄດ້. ມີແຕ່ການກັບໃຈມາຫາພຣະເຈົ້າ ແລະ ການເຊື່ອວາງ ໃຈໃນພຣະຄຣິສເທົ່ານັ້ນ ທີ່ສາມາດຊ່ວຍຄົນບາບໃຫ້ລອດພົ້ນໄດ້. ພຣະຄຸນຂອງພຣະຄຣິສບໍ່ແມ່ນສິ່ງ ທີ່ຈະຊື້ໄດ້ ແຕ່ເປັນຂອງປະທານທີ່ບໍ່ຕ້ອງເສຍຄ່າ. ລູເທີແນະນຳປະຊາຊົນບໍ່ໃຫ້ຊື້ໃບລ້າງບາບ ແຕ່ໃຫ້ ເບິ່ງພຣະຜູ້ໄຖ່ດ້ວຍຄວາມເຊື່ອ ເພາະພຣະອົງຖືກຕຶງໄວ້ທີ່ໄມ້ກາງແຂນເພື່ອໄຖ່ບາບຂອງພວກເຂົາ. ເພິ່ນ ໄດ້ກ່າວເຖິງປະສົບການອັນເຈັບປວດຂອງຕົນໃນການພະຍາຍາມຫາຄວາມລອດພົ້ນດ້ວຍການຖ່ອມໃຈ ລົງ ແລະ ການທໍລະມານຕົນເພື່ອຊົດໃຊ້ບາບໂດຍບໍ່ມີປະໂຫຍດ. ນອກຈາກນັ້ນ, ກໍຍັງຢືນຢັນໃຫ້ແກ່ຜູ້ ຟັງວ່າເພິ່ນໄດ້ຮັບສັນຕິສຸກ ແລະ ຄວາມຊົ່ນຊື່ນຍິນດີດ້ວຍການເຊື່ອວາງໃຈໃນພຣະຄຣິສ ແລະ ການ ເຊົາເບິ່ງທີ່ຕົນເອງ. *{GC 129.1}*

ຄຳປະທ້ວງ 95 ຂໍ້

ໃນຂະນະທີ່ ເທັດເຊັນ ສືບຕໍ່ຂາຍໃບລ້າງບາບ ແລະ ປັ້ນເລື່ອງຢ່າງໝິ່ນປະໝາດນັ້ນ, ລູເທີຕັ້ງໃຈ ປະທ້ວງຄວາມຊົ່ວດັ່ງກ່າວ ໂດຍໃຊ້ວິທີທີ່ຈະໄດ້ຜົນດີກວ່າ, ໃນບໍ່ຊ້າຈຶ່ງໄດ້ໂອກາດ. ໂບດໃນຜາສາດຫີນ ແຫ່ງເມືອງວິດເທັນເບີກມີວັດຖຸສັກສິດຫຼາຍອັນ ແລະ ໃນວັນສຳຄັນທາງສາສະໜາ ກໍຈະມີການນຳວັດຖຸ ສັກສິດເຫຼົ່ານີ້ອອກມາໃຫ້ປະຊາຊົນເບິ່ງ. ມີການປະກາດວ່າ, ທຸກຄົນທີ່ມາຢາມໂບດ ແລະ ສາລະພາບ ບາບໃນວັນທີ່ສະແດງວັດຖຸສັກສິດກໍຈະໄດ້ຮັບການອະໄພບາບຢ່າງຄົບຖ້ວນ. ສະນັ້ນ, ຈຶ່ງມີປະຊາຊົນ ເຂົ້າໂບດຢ່າງຫຼວງຫຼາຍໃນວັນສຳຄັນດັ່ງກ່າວ. ເວລານັ້ນໃກ້ເຖິງເທດສະການທີ່ສຳຄັນທີ່ສຸດເທດສະການ ໜຶ່ງ ຄືເທດສະການການສະຫຼອງບັນດານັກບຸນທີ່ລ່ວງລັບໄປແລ້ວ. ກ່ອນເທດສະການໜຶ່ງວັນ[14] ລູເທີ ຮ່ວມຢ່າງໄປກັບຝູງຊົນມຸ່ງໜ້າໄປໂບດ ແລະ ໄດ້ຕິດປະກາດຄຳປະທ້ວງ 95 ຂໍ້ ໄວ້ທີ່ປະຕູໂບດເພື່ອ ຕໍ່ຕ້ານຄຳສອນເລື່ອງໃບລ້າງບາບ ໂດຍປະກາດວ່າຖ້າມີຜູ້ໃດເຫັນສົມຄວນກ່າວຄັດຄ້ານ ເພິ່ນພ້ອມຈະ ປ້ອງກັນຄຳປະທ້ວງເຫຼົ່ານີ້ທີ່ມະຫາວິທະຍາໄລໃນມື້ຕໍ່ໄປ. *{GC 129.2}*

ຄຳປະທ້ວງຂອງລູເທີກາຍເປັນຂ່າວທີ່ທຸກຄົນຫັນມາໃຫ້ຄວາມສົນໃຈ. ຜູ້ຄົນພາກັນອ່ານຊ້ຳແລ້ວ ຊ້ຳອີກ ແລ້ວນຳໄປເລົ່າຕໍ່ໃນທຸກບ່ອນທຸກແຫ່ງ. ເລື່ອງນີ້ສ້າງຄວາມຕື່ນຕົວຢ່າງບໍ່ເຄີຍມີມາກ່ອນໃນ ມະຫາວິທະຍາໄລ ແລະ ທົ່ວທັງເມືອງ. ຄຳປະທ້ວງ 95 ຂໍ້ນີ້ພິສູດໃຫ້ເຫັນວ່າ ສິດອຳນາດໃນ ການອະໄພບາບ ຫຼື ຍົກໂທດຄວາມບາບບໍ່ເຄີຍຖືກມອບໃຫ້ແກ່ສັນຕະປາປາ ຫຼື ມະນຸດຄົນໃດ ເລີຍ. ການຂາຍໃບລ້າງບາບນີ້ເປັນພຽງລະຄອນຕະຫຼົກ, ເປັນກົນອຸບາຍຫາເງິນໂດຍອາໄສຄວາມ

[13] ໂດບິນເຍ, ເຫຼັ້ມ 3, ບົດ 4.
[14] ຄືນວັນທີ 31 ຕຸລາ 1517.

ງົມງວາຍຂອງປະຊາຊົນ, ເປັນແຜນຂອງຊາຕານ ເພື່ອທຳລາຍຈິດວິນຍານຂອງທຸກຄົນທີ່ຫຼົງເຊື່ອຄຳ ຫຼອກລວງນີ້. ລູເທີຍັງປະກາດຢ່າງຈະແຈ້ງວ່າ ຂ່າວປະເສີດຂອງພຣະຄຣິສເປັນຊັບສົມບັດອັນລ້ຳຄ່າ ທີ່ສຸດຂອງຄຣິສຕະຈັກ ແລະ ພຣະຄຸນຂອງພຣະເຈົ້າທີ່ເປີດເຜີຍໃນຂ່າວປະເສີດນັ້ນ ມີໃຫ້ທຸກຄົນທີ່ ສະແຫວງຫາດ້ວຍການກັບໃຈ ແລະ ຄວາມເຊື່ອ ໂດຍບໍ່ຄິດມູນຄ່າ. {GC 130.1}

ລູເທີທ້າທາຍໃຫ້ມີການອະພິປາຍໃນປະເດັນຄຳປະທ້ວງຂອງເພິ່ນ ແຕ່ບໍ່ມີໃຜກ້າຮັບຄຳທ້າທາຍ ນີ້. ພາຍໃນບໍ່ເທົ່າໃດມື້ ຄຳປະທ້ວງທີ່ລູເທີສະເໜີນັ້ນກໍແຜ່ກະຈາຍໄປທົ່ວເຢຍລະມັນ ແລະ ໃນອີກບໍ່ພໍ ເທົ່າໃດອາທິດ ກໍດັງກ້ອງໄປທົ່ວເອີຣົບ. ມີຄົນສັດທາໃນຄຣິສຕະຈັກໂຣມຫຼາຍຄົນ ທີ່ເຄີຍໂສກເສົ້າເພາະ ຄວາມບາບຊົ່ວທີ່ປາກົດຢູ່ໃນຄຣິສຕະຈັກໃນເວລານັ້ນ ແຕ່ບໍ່ຮູ້ຈະຢຸດຢັ້ງມັນໄດ້ແນວໃດ. ເມື່ອພວກເຂົາອ່ານ ຄຳປະທ້ວງຂອງລູເທີກໍເຕັມໄປດ້ວຍຄວາມຊົມຊື່ນຍິນດີ ເພາະຮູ້ວ່ານີ້ແມ່ນສຽງຂອງພຣະເຈົ້າ. ພວກເຂົາ ຮູ້ສຶກວ່າອົງພຣະຜູ້ເປັນເຈົ້າຊົງຍື່ນພຣະຫັດລົງມາ ເພື່ອຢຸດຢັ້ງກະແສແຫ່ງຄວາມຊົ່ວທີ່ກຳລັງໄຫຼລົ້ນ ອອກມາຈາກສັນຕະສຳນັກຂອງໂຣມ. ບັນດາເຈົ້າແຂວງ ແລະ ເຈົ້າເມືອງກໍແອບດີໃຈ ທີ່ຈະມີການ ຈຳກັດອຳນາດອັນອວດດີຂອງສັນຕະປາປາ ຜູ້ເຊິ່ງບໍ່ຍອມໃຫ້ມີການອຸທອນໃນເລື່ອງທີ່ຕົນໄດ້ຕັດສິນໄປ ແລ້ວ. {GC 130.2}

ແຕ່ຝູງຊົນທີ່ງົມງວາຍ ແລະ ຮັກການເຮັດບາບກໍພາກັນສະທ້ານຢ້ານກົວ ເມື່ອຄຳສອນອັນຫຼອກລວງ ທີ່ເຄີຍປອບໃຈພວກເຂົາໄດ້ຖືກກວາດຖິ້ມໄປ. ພວກຜູ້ນຳຄຣິສຕະຈັກຫົວໝໍ ເມື່ອຖືກຂັດຈັງຫວະໃນ ການອະນຸຍາດໃຫ້ເຮັດຊົ່ວ ແລະ ເມື່ອເຫັນວ່າລາຍໄດ້ຂອງຕົນກຳລັງຕົກຢູ່ໃນອັນຕະລາຍ ກໍພາກັນ ຄຶງດແຄ້ນ ແລະ ຮ່ວມມືກັນເພື່ອປົກປ້ອງຂໍ້ອ້າງຂອງພວກເຂົາ. ລູເທີຕ້ອງຮັບມືກັບຄົນທີ່ຕໍ່ຕ້ານເພິ່ນຢ່າງ ຮຸນແຮງ. ບາງຄົນຫາວ່າເພິ່ນເຮັດໄປຕາມອາລົມໂດຍບໍ່ຄິດໜ້າຄິດຫຼັງ. ສ່ວນຄົນອື່ນກ່າວຫາວ່າເພິ່ນ ອວດອ້າງເກີນຂອບເຂດ ໂດຍເວົ້າວ່າພຣະເຈົ້າບໍ່ໄດ້ຊົງນຳພາເພິ່ນ ແຕ່ເພິ່ນບັງອາດເຮັດໄປດ້ວຍຄວາມ ຈອງຫອງ. ລູເທີຕອບວ່າ: “ໃຜບໍ່ຮູ້ວ່າ ຄົນທີ່ນຳສະເໜີແນວຄິດໃໝ່ເກືອບທຸກຄົນ ມັກຖືກຫາວ່າມີຄວາມ ຈອງຫອງ ແລະ ກໍ່ໃຫ້ເກີດການທະເລາະວິວາດຂຶ້ນ.... ເປັນຫຍັງພຣະຄຣິສ ແລະ ບັນດາຜູ້ຍອມ ຕາຍເພື່ອຄວາມເຊື່ອຈຶ່ງຖືກປະຫານຊີວິດ? ກໍເພາະໃນສາຍຕາຂອງຄົນໃນສັງຄົມ ພຣະເຢຊູ ແລະ ຄົນ ເຫຼົ່ານັ້ນເບິ່ງຄືຄົນຈອງຫອງທີ່ໝິ່ນປະໝາດປັນຍາຂອງຍຸກນັ້ນ ແລະ ເພາະການນຳສະເໜີສິ່ງແປກ ໃໝ່ ໂດຍທີ່ບໍ່ໄດ້ຖ່ອມຕົວຂໍຄຳປຶກສາຈາກຜູ້ຊ່ຽວຊານແນວຄິດບູຮານ.” {GC 130.3}

ລູເທີຍັງປະກາດອີກວ່າ: “ສິ່ງໃດກໍຕາມທີ່ຂ້າພະເຈົ້າຈະເຮັດນັ້ນ ຈະສຳເລັດບໍ່ແມ່ນດ້ວຍສະຕິປັນຍາ ຂອງມະນຸດ ແຕ່ດ້ວຍການຊົງນຳຂອງພຣະເຈົ້າ. ຖ້າວຽກງານນີ້ມາຈາກພຣະເຈົ້າ, ໃຜຈະຢຸດມັນໄດ້? ຖ້າ ບໍ່ແມ່ນ, ໃຜຈະເຮັດໃຫ້ມັນສຳເລັດ? ບໍ່ແມ່ນຕາມໃຈຂ້າພະເຈົ້າ, ບໍ່ແມ່ນຕາມໃຈພວກເຂົາ, ບໍ່ແມ່ນຕາມ ໃຈພວກເຮົາ, ແຕ່ຂໍໃຫ້ເປັນໄປຕາມພຣະປະສົງຂອງພຣະບິດາຜູ້ສະຖິດຢູ່ໃນສະຫວັນ.”[15] {GC 131.1}

ການຕໍ່ຕ້ານຈາກຜູ້ມີອຳນາດ

ເຖິງແມ່ນວ່າພຣະວິນຍານຂອງພຣະເຈົ້າຊົງດົນໃຈໃຫ້ລູເທີເລີ່ມວຽກງານຂອງເພິ່ນ ແຕ່ເພິ່ນຕ້ອງ ປະເຊີນກັບການຕໍ່ຕ້ານຢ່າງຮຸນແຮງ. ການຕຳໜິຕິຕຽນຂອງພວກສັດຕູ, ການບິດເບືອນເຈດຕະນາຂອງ ເພິ່ນ ແລະ ການໃສ່ຮ້າຍປ້າຍສີອຸປະນິໄສ ແລະ ແຮງຈູງໃຈຂອງເພິ່ນຢ່າງບໍ່ເປັນທຳ ໄດ້ຖາໂຖມເຂົ້າ ໃສ່ເພິ່ນເໝືອນຄື້ນຊຶນາມິທີ່ພັດຖ້ວມຕົວ ເຊິ່ງກະທົບຕໍ່ຄວາມຮູ້ສຶກຂອງເພິ່ນບໍ່ຫຼາຍກໍໜ້ອຍ. ເພິ່ນເຄີຍ ໝັ້ນໃຈວ່າບັນດາຜູ້ນຳທັງໃນຄຣິສຕະຈັກ ແລະ ໃນສະຖາບັນການສຶກສາຈະຮ່ວມມືກັບເພິ່ນໃນການ

[15] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 3, ບົດ 6.

ປະຕິຮູບດ້ວຍຄວາມຍິນດີ. ຄຳໝັ້ນໃຈຈາກຜູ້ມີອຳນາດສູງໄດ້ສ້າງຄວາມຊົມຊື່ນຍິນດີ ແລະ ຄວາມຫວັງໃຫ້ແກ່ເພິ່ນ. ເພິ່ນເຫັນມື້ອັນສົດໃສກຳລັງຈະມາເຖິງສຳລັບຄຣິສຕະຈັກ. ແຕ່ຄຳໝັ້ນໃຈໄດ້ກາຍເປັນຄຳຕຳໜິ ແລະ ການກ່າວໂທດ. ເຈົ້າໜ້າທີ່ຫຼາຍຄົນທັງໃນຄຣິສຕະຈັກ ແລະ ໃນບ້ານເມືອງຮູ້ວ່າ ຄຳປະທ້ວງຂອງລູເທີເປັນຄວາມຈິງ, ແຕ່ພວກເຂົາເຫັນວ່າການຍອມຮັບຄວາມຈິງເຫຼົ່ານັ້ນຈະນຳໄປສູ່ການປ່ຽນແປງຄັ້ງໃຫຍ່. ຖ້າຈະນຳແສງສະຫວ່າງໃຫ້ປະຊາຊົນ ແລະ ປະຕິຮູບພວກເຂົາ ກໍເທົ່າກັບເປັນການທຳລາຍອຳນາດຂອງຄຣິສຕະຈັກໂຣມ, ເງິນທີ່ໄຫຼເຂົ້າຄັງເງິນຂອງຄຣິສຕະຈັກເປັນກອບເປັນກຳນັ້ນກໍຈະຢຸດລົງ ແລ້ວພວກຜູ້ນຳໃນລະບອບສັນຕະປາປາຈະບໍ່ສາມາດໃຊ້ຊີວິດຢ່າງຫຼູຫຼາເໝືອນທີ່ຜ່ານມາ. ຊ້ຳບໍ່ໝຳ, ຖ້າສອນໃຫ້ປະຊາຊົນຄິດເປັນ, ຮັບຜິດຊອບຊີວິດຂອງຕົນເອງ ແລະ ເບິ່ງໄປຍັງພຣະຄຣິສແຕ່ຜູ້ດຽວເພື່ອຄວາມລອດພົ້ນ, ກໍຈະນຳໄປສູ່ການທຳລາຍບັນລັງຂອງສັນຕະປາປາ ແລະ ໃນທີ່ສຸດອຳນາດຂອງພວກເຂົາກໍຈະຖືກທຳລາຍເຊັ່ນກັນ. ດ້ວຍເຫດນີ້, ພວກເຂົາຈຶ່ງປະຕິເສດຄວາມຮູ້ທີ່ພຣະເຈົ້າປະທານໃຫ້ ແລະ ຕໍ່ຕ້ານພຣະຄຣິສ ແລະ ຄວາມຈິງ ໂດຍການຂັດຂວາງຜູ້ທີ່ພຣະອົງສົ່ງມາໃຫ້ປະກາດຄວາມຈິງແກ່ພວກເຂົາ. *{GC 131.2}*

ລູເທີຕົວສັ່ນເມື່ອຄຳນຶງວ່າ ເພິ່ນເປັນຊາຍຄົນດຽວທີ່ກຳລັງຕໍ່ຕ້ານມະຫາອຳນາດຂອງໂລກ. ບາງຄັ້ງເພິ່ນສົງໄສວ່າ ແມ່ນແທ້ບໍ ທີ່ພຣະເຈົ້າຊົງນຳໃຫ້ເພິ່ນຕໍ່ສູ້ກັບສິດອຳນາດຂອງຄຣິສຕະຈັກໂຣມ. ເພິ່ນຂຽນວ່າ: “ຂ້າພະເຈົ້າແມ່ນໃຜທີ່ຈະຕໍ່ຕ້ານອຳນາດຍິ່ງໃຫຍ່ຂອງສັນຕະປາປາທີ່ມີ . . . ກະສັດທັງຫຼາຍໃນໂລກ ແລະ ປະຊາຊົນທັງປວງຍືນຕົວສັ່ນຕໍ່ໜ້າເພິ່ນ? . . . ບໍ່ມີໃຜຮູ້ໄດ້ວ່າໃນສອງປີທຳອິດນັ້ນຈິດໃຈຂອງຂ້າພະເຈົ້າເປັນທຸກສ່ຳໃດ, ແລ້ວຂ້າພະເຈົ້າຮູ້ສຶກທໍ້ຖອຍສິ້ນຫວັງພຽງໃດ.”[16] ແຕ່ພຣະເຈົ້າບໍ່ຊົງປະໃຫ້ເພິ່ນທໍ້ຖອຍໝົດຫວັງຈົນສິ້ນເຊີງ. ເມື່ອບໍ່ມີມະນຸດຊ່ວຍເຫຼືອແລ້ວ ເພິ່ນຈຶ່ງເພິ່ງພາພຣະເຈົ້າແຕ່ຜູ້ດຽວ ແລະ ໄດ້ຮຽນຮູ້ວ່າ ເພິ່ນສາມາດພັກພິງໃນອ້ອມແຂນອັນຊົງຣິດຂອງພຣະອົງ ດ້ວຍຄວາມປອດໄພຢ່າງແທ້ຈິງ. *{GC 132.1}*

ລູເທີຂຽນເຖິງໝູ່ເພື່ອນຄົນໜຶ່ງຜູ້ສະໜັບສະໜຸນການປະຕິຮູບວ່າ: “ພວກເຮົາບໍ່ສາມາດເຂົ້າໃຈພຣະ-ຄຳພີດ້ວຍການສຶກສາ ຫຼື ສະຕິປັນຍາຂອງເຮົາເອງ. ໜ້າທີ່ທຳອິດຂອງທ່ານແມ່ນຕ້ອງເລີ່ມຕົ້ນດ້ວຍການອະທິຖານ. ຈົ່ງທູນຂໍໃຫ້ອົງພຣະຜູ້ເປັນເຈົ້າຊົງໂຜດປະທານຄວາມເຂົ້າໃຈອັນແທ້ຈິງໃນພຣະຄຳຂອງພຣະອົງດ້ວຍພຣະກະລຸນາອັນລົ້ນເຫຼືອ. ບໍ່ມີຜູ້ໃດສາມາດອະທິບາຍພຣະຄຳຂອງພຣະເຈົ້າໄດ້ນອກຈາກພຣະອົງຜູ້ຊົງປະທານພຣະຄຳນັ້ນ ດັ່ງທີ່ພຣະອົງຊົງກ່າວວ່າ: “ພວກເຂົາທັງຫຼາຍຈະໄດ້ຮັບການສອນຈາກພຣະເຈົ້າ.” (ໂຢຮັນ 6:45 LCV). ຢ່າຫວັງເພິ່ງຄວາມພະຍາຍາມ ຫຼື ຄວາມເຂົ້າໃຈຂອງຕົນເອງ. ຈົ່ງເພິ່ງພາພຣະເຈົ້າ ແລະ ການຊົງນຳຂອງພຣະວິນຍານຂອງພຣະອົງເທົ່ານັ້ນ. ຈົ່ງເຊື່ອຄຳເວົ້ານີ້ຈາກຄົນທີ່ໄດ້ຜ່ານປະສົບການມາແລ້ວ.”[17] ນີ້ແມ່ນບົດຮຽນອັນສຳຄັນຍິ່ງ ສຳລັບຜູ້ທີ່ຮູ້ສຶກວ່າພຣະເຈົ້າຊົງຮຽກເອີ້ນໃຫ້ນຳຄວາມຈິງອັນເລິກເຊິ່ງສຳລັບຍຸກນີ້ໄປປະກາດແກ່ຜູ້ອື່ນ. ຄວາມຈິງເຫຼົ່ານີ້ຈະປຸກຊາຕານ ແລະ ຜູ້ທີ່ຫຼົງຮັກເລື່ອງຫຼອກລວງຂອງມັນໃຫ້ລຸກຂຶ້ນຕໍ່ຕ້ານ. ໃນການຕໍ່ສູ້ກັບອຳນາດຊົ່ວຮ້າຍນັ້ນ ການມີສະຕິປັນຍາ ແລະ ຄວາມສະຫຼາດຂອງມະນຸດເທົ່ານັ້ນບໍ່ພຽງພໍ. *{GC 132.2}*

ເມື່ອພວກສັດຕູອ້າງຮີດຄອງປະເພນີ ຫຼື ຍົກຄຳຖະແຫຼງ ແລະ ອຳນາດຂອງສັນຕະປາປາມາໂຕ້ຖຽງ, ລູເທີຕອບໂຕ້ດ້ວຍພຣະຄຳພີພຽງຢ່າງດຽວ, ເປັນເຫດຜົນທີ່ພວກເຂົາບໍ່ສາມາດໂຕ້ຕອບໄດ້. ດັ່ງນັ້ນ, ຄົນທີ່ເປັນທາດຂອງປະເພນີ ແລະ ຄວາມງົມງວາຍຈຶ່ງກະຫາຍເລືອດລູເທີ ເໝືອນ

[16] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 3, ບົດ 6.
[17] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 3, ບົດ 7.

ຄົນຢິວໄດ້ຮ້ອງຂໍໃຫ້ປະຫານຊີວິດພຣະເຢຊູຄຣິສ. ພວກເຂົ້ງໃນລະບອບສັນຕະປາປາຮ້ອງວ່າ: “ມັນເປັນ ຄົນນອກຮີດ. ການປ່ອຍຄົນທີ່ນອກຮີດຜູ້ຊົ່ວຮ້າຍເຊັ່ນນີ້ໃຫ້ມີຊີວິດຕໍ່ອີກຊົ່ວໂມງໜຶ່ງ ກໍເປັນຄວາມຜິດ ຮ້າຍແຮງຕໍ່ຄຣິສຕະຈັກ. ໃຫ້ເຮົາປັກຫຼັກປະຫານ ແລະ ເຜົາມັນໃຫ້ຕາຍດຽວນີ້!”[18] ແຕ່ລູເທີບໍ່ໄດ້ ຕົກເປັນເຫຍື່ອຄວາມໂກດຮ້າຍຂອງພວກເຂົາ. ພຣະເຈົ້າຍັງມີພາລະກິດໃຫ້ເພິ່ນເຮັດ ແລະ ໄດ້ສົ່ງເຫຼົ່າ ທູດສະຫວັນມາປົກປ້ອງເພິ່ນ. ເຖິງຢ່າງໃດກໍຕາມ, ຫຼາຍຄົນທີ່ໄດ້ຮັບຄວາມສະຫວ່າງອັນລ້ຳຄ່າຈາກ ລູເທີ ໄດ້ຕົກເປັນເປົ້າຄວາມຄຽດແຄ້ນຂອງຊາຕານ. ຄົນເຫຼົ່ານີ້ຍອມຖືກທໍລະມານ ແລະ ຖືກຂ້າຕາຍ ເພື່ອຄວາມຈິງໂດຍບໍ່ຢ້ານກົວແຕ່ຢ່າງໃດ. *{GC 132.3}*

ຄົນຮູ້ຈັກຄິດທົ່ວອານາຈັກເຢຍລະມັນ ຕ່າງໃຫ້ຄວາມສົນໃຈໃນຄຳສອນຂອງລູເທີ. ຄຳເທດສະໜາ ແລະ ບົດຄວາມງານຂຽນຂອງເພິ່ນເປັນດັ່ງລຳແສງທີ່ສ່ອງໄປໃຫ້ຄົນຈຳນວນຫຼວງຫຼາຍຕື່ນຂຶ້ນ. ຄວາມເຊື່ອ ທີ່ມີຊີວິດກຳລັງເຂົ້າມາແທນທີ່ສະພາບຈິດວິນຍານທີ່ຕາຍແລ້ວເພາະເນັ້ນພິທີກຳ ເຊິ່ງເປັນສະພາບຂອງ ຄຣິສຕະຈັກມາເປັນເວລາດົນນານ. ນັບມື້ປະຊາຊົນຍິ່ງໝົດຄວາມເຊື່ອໝັ້ນໃນຄວາມງົມງວາຍຂອງ ຄຣິສຕະຈັກໂຣມ. ຄວາມເຊື່ອຜິດ ໆ ທີ່ເປັນເໝືອນກຳແພງທີ່ຂວາງກັ້ນນັ້ນກຳລັງພັງເພລົງມາ. ພຣະຄຳ ຂອງພຣະເຈົ້າທີ່ລູເທີໃຊ້ທົດສອບຄຳສອນ ແລະ ຫຼັກຄວາມເຊື່ອທຸກຢ່າງນັ້ນ ກຳປຽບເໝືອນດາບ ສອງຄົມທີ່ແທງເຂົ້າເຖິງຈິດໃຈຂອງປະຊາຊົນ. ປະຊາຊົນໃນທຸກບ່ອນໄດ້ຕື່ນຕົວຂຶ້ນ ແລະ ມີຄວາມ ປາຖະໜາຢາກເຕີບໃຫຍ່ທາງຈິດວິນຍານ. ທຸກແຫ່ງມີຄວາມຫິວກະຫາຍຄວາມຊອບທຳ ເຊິ່ງບໍ່ເຄີຍ ມີມາກ່ອນເປັນເວລາຫຼາຍສະຕະວັດ. ປະຊາຊົນເຄີຍຫວັງເພິ່ງປະເພນີຂອງມະນຸດ ແລະ ຄົນກາງ ທີ່ເປັນມະນຸດ, ມາບັດນີ້ພວກເຂົາກໍຖ່ອມໃຈລົງ ແລະ ຫັນມາຮັບເຊື່ອໃນພຣະຄຣິສຜູ້ຖືກຄຶງໄວ້ທີ່ ໄມ້ກາງແຂນ. *{GC 133.1}*

ຖືກສັ່ງໃຫ້ຂຶ້ນສານທີ່ນະຄອນໂຣມ

ຄວາມສົນໃຈທີ່ແຜ່ຂະຫຍາຍອອກໄປນີ້ເຮັດໃຫ້ພວກເຈົ້າໜ້າທີ່ໃນລະບອບສັນຕະປາປາຍິ່ງຢ້ານກົວ ຫຼາຍຂຶ້ນ. ລູເທີໄດ້ຮັບໝາຍຮຽກໃຫ້ໄປຂຶ້ນສານທີ່ນະຄອນໂຣມເພື່ອຕອບຂໍ້ກ່າວຫາວ່າເປັນຄົນນອກຮີດ. ຄຳສັ່ງນີ້ເຮັດໃຫ້ໝູ່ເພື່ອນຂອງເພິ່ນຕົກໃຈຢ້ານ. ພວກເຂົາຮູ້ດີເຖິງອັນຕະລາຍທີ່ລໍຖ້າເພິ່ນຢູ່ໃນນະຄອນອັນ ຊົ່ວຮ້າຍນັ້ນ ເຊິ່ງມົວເມົາດ້ວຍເລືອດຂອງຜູ້ຕາຍເພື່ອຄວາມເຊື່ອໃນພຣະເຢຊູ. ພວກເຂົາຈຶ່ງຄັດຄ້ານການ ໄປນະຄອນໂຣມ ແລະ ຂໍໃຫ້ເພິ່ນຮັບການສອບສວນໃນເຢຍລະມັນແທນ. *{GC 133.2}*

ໃນທີ່ສຸດມີການຕົກລົງຕາມນັ້ນ ແລະ ໄດ້ແຕ່ງຕັ້ງຕົວແທນຂອງສັນຕະປາປາມາພິຈາລະນາຄະດີ. ໃນ ຄຳສັ່ງທີ່ສັນຕະປາປາມອບໃຫ້ເຈົ້າໜ້າທີ່ຜູ້ນີ້ ໄດ້ລະບຸວ່າລູເທີຖືກຕັດສິນເປັນຜູ້ສອນນອກຮີດໄປຮຽບຮ້ອຍ ແລ້ວ. ດັ່ງນັ້ນ, ຕົວແທນຜູ້ນີ້ຈຶ່ງໄດ້ຮັບຄຳສັ່ງ “ໃຫ້ດຳເນີນຄະດີ ແລະ ຈັບກຸມໂດຍບໍ່ໃຫ້ຊັກຊ້າ.” ຖ້າ ລູເທີຍັງຢືນຢັດບໍ່ຍອມຮັບຜິດ ແລະ ຕົວແທນບໍ່ສາມາດຈັບກຸມໄດ້ ກໍໃຫ້ມີອຳນາດ “ຕັດສິດຂອງລາວ ທົ່ວທຸກບ່ອນໃນເຢຍລະມັນ, ໃຫ້ເນລະເທດ ແລະ ສາບແຊ່ງທຸກຄົນທີ່ສະໜັບສະໜູນລາວ ພ້ອມທັງ ຕັດຊື່ພວກເຂົາອອກຈາກຄຣິສຕະຈັກ.”[19] ຍິ່ງໄປກວ່ານັ້ນ, ເພື່ອກຳຈັດຄຳສອນນອກຮີດທີ່ແຜ່ລາມນີ້ ໃຫ້ໝົດສິ້ນ, ສັນຕະປາປາຈຶ່ງສັ່ງໃຫ້ຕົວແທນຂອງເພິ່ນຕັດຄວາມເປັນສະມາຊິກຄຣິສຕະຈັກຂອງທຸກຄົນ ທີ່ບໍ່ຍອມຈັບກຸມລູເທີກັບພັກພວກ ແລະ ສົ່ງໃຫ້ຄຣິສຕະຈັກໂຣມລົງໂທດ, ບໍ່ວ່າຈະມີຕຳແໜ່ງສູງໃນ ຄຣິສຕະຈັກ ຫຼື ຝ່າຍປົກຄອງກໍຕາມ ຍົກເວັ້ນຈັກກະພັດເທົ່ານັ້ນ. *{GC 133.3}*

---

[18] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 3, ບົດ 9.
[19] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 4, ບົດ 2.

ພຶດຕິກຳນີ້ສະແດງເຖິງທາດແທ້ຂອງລະບອບສັນຕະປາປາ. ໃນເອກະສານສະບັບນີ້ບໍ່ມີຮ່ອງຮອຍຂອງຫຼັກການຄຣິສຕຽນ ຫຼື ແມ່ນແຕ່ຄວາມຍຸຕິທຳທົ່ວໄປ. ລູເທີຢູ່ຫ່າງໄກຈາກນະຄອນໂຣມ ແລະ ບໍ່ມີໂອກາດອະທິບາຍ ຫຼື ປົກປ້ອງຈຸດຢືນຂອງຕົນ. ແຕ່ກ່ອນທີ່ຈະມີການສືບສວນຄະດີ ເພິ່ນກໍຖືກຕັດສິນວ່າເປັນຜູ້ສອນນອກຮີດ. ໃນມື້ດຽວກັນນັ້ນເພິ່ນຖືກຕັກເຕືອນ, ຖືກກ່າວຫາ, ຖືກພິພາກສາ ແລະ ຖືກຕັດສິນວ່າມີຄວາມຜິດ. ທັງໝົດນີ້ ເຮັດໂດຍຜູ້ທີ່ອ້າງຕົນເປັນພຣະບິດາຜູ້ບໍຣິສຸດ, ຜູ້ມີອຳນາດສູງສຸດໃນຄຣິສຕະຈັກ ແລະ ຝ່າຍການປົກຄອງ ທັງເປັນຜູ້ທີ່ອ້າງວ່າບໍ່ມີວັນຜິດພາດ! *{GC 134.1}*

ໃນເວລານີ້ເມື່ອລູເທີຕ້ອງການຄວາມເຫັນໃຈ ແລະ ຄຳແນະນຳຈາກເພື່ອນແທ້, ພຣະເຈົ້າຊົງຈັດຕຽມໃຫ້ເມລັງໂທນ (Melanchthon) ເດີນທາງໄປເມືອງວິດເທັນເບີກ. ເພິ່ນອາຍຸຍັງນ້ອຍ ເປັນຄົນສຸພາບ ແລະ ຂີ້ອາຍ, ແຕ່ມີວິຈາລະນະຍານ, ຄວາມຮອບຮູ້, ວາທະສິນທີ່ໂນ້ມນ້າວໃຈ ແລະ ການດຳເນີນຊີວິດທີ່ບໍຣິສຸດທ່ຽງທຳ ເຊິ່ງເຮັດໃຫ້ເມລັງໂທນເປັນທີ່ຍອມຮັບນັບຖືຂອງຄົນທົ່ວໄປ. ຄວາມອ່ອນສຸພາບຂອງເພິ່ນກໍໂດດເດັ່ນບໍ່ດ້ອຍກວ່າຄວາມສາມາດອັນປາດເປື່ອງ. ໃນບໍ່ຊ້າ, ເພິ່ນກໍມາເປັນສາວົກທີ່ເອົາໃຈໃສ່ຂ່າວປະເສີດຢ່າງຂະຫຍັນໝັ່ນພຽນ ແລະ ກາຍເປັນມິດສະຫາຍທີ່ລູເທີໄວ້ວາງໃຈທີ່ສຸດ ພ້ອມທັງເປັນຜູ້ສະໜັບສະໜູນທີ່ສຳຄັນ. ຄວາມອ່ອນສຸພາບ, ຄວາມລະມັດລະວັງ ແລະ ຄວາມລະອຽດຂອງເມລັງໂທນຊ່ວຍເຕີມເຕັມໃຫ້ກັບຄວາມກ້າຫານ ແລະ ຄວາມກະຕືລືລົ້ນຂອງລູເທີ. ການຮ່ວມມືຂອງທັງສອງຄົນນີ້ໄດ້ເສີມກຳລັງໃຫ້ກັບການປະຕິຮູບສາສະໜາ ແລະ ເປັນແຫຼ່ງກຳລັງໃຈອັນຍິ່ງໃຫຍ່ຂອງລູເທີ. *{GC 134.2}*

ຂຶ້ນສານທີ່ເມືອງອອກເບີກ

ເມືອງອອກເບີກ (Augsburg) ຖືກກຳນົດເປັນສະຖານທີ່ພິຈາລະນາຄະດີຂອງລູເທີ, ເພິ່ນຈຶ່ງອອກເດີນທາງດ້ວຍການຍ່າງໄປທີ່ນັ້ນ. ຫຼາຍຄົນມີຄວາມກັງວົນຢ່າງໜັກຕໍ່ຄວາມປອດໄພຂອງເພິ່ນ. ມີການຂົ່ມຂູ່ຢ່າງເປີດເຜີຍວ່າເພິ່ນຈະຖືກຈັບກຸມ ແລະ ຖືກຂ້າລະຫວ່າງທາງ, ໝູ່ເພື່ອນຈຶ່ງອ້ອນວອນບໍ່ໃຫ້ເພິ່ນສ່ຽງໄປ. ພວກເຂົາຍັງຂໍຮ້ອງໃຫ້ເພິ່ນອອກຈາກເມືອງວິດເທັນເບີກໄປພັກຊົ່ວຄາວນຳຄົນທີ່ພ້ອມປົກປ້ອງເພິ່ນ. ແຕ່ເພິ່ນບໍ່ຍອມປະຖິ້ມໜ້າທີ່ທີ່ພຣະເຈົ້າຊົງມອບໃຫ້. ເພິ່ນຕ້ອງສືບຕໍ່ຢືນຢັດເພື່ອຄວາມຈິງຢ່າງສັດຊື່ ເຖິງແມ່ນວ່າພະຍຸຈະພັດຖະຖົ່ມໃສ່ກໍຕາມ. ເພິ່ນກ່າວວ່າ: “ຂ້າພະເຈົ້າຄືກັບເຢເຣມີຢາ, ເປັນຄົນທີ່ຢູ່ທ່າມກາງຄວາມຂັດແຍ້ງ ແລະ ການຕໍ່ສູ້, ແຕ່ພວກເຂົາຍິ່ງຂົ່ມຂູ່ຫຼາຍຂຶ້ນເທົ່າໃດ ຄວາມຊົ່ນຊື່ນຍິນດີຂອງຂ້າພະເຈົ້າກໍຍິ່ງເພີ່ມຂຶ້ນເທົ່ານັ້ນ. . . . ພວກເຂົາໄດ້ທຳລາຍສັກສີ ແລະ ຊື່ສຽງຂອງຂ້າພະເຈົ້າແລ້ວ, ຍັງເຫຼືອພຽງສິ່ງດຽວ ຄືຮ່າງກາຍອັນບໍ່ມີຄ່າຂອງຂ້າພະເຈົ້າ. ໃຫ້ພວກເຂົາເອົາໄປເທາະ ພວກເຂົາຈະພຽງແຕ່ເຮັດໃຫ້ຊີວິດຂອງຂ້າພະເຈົ້າສັ້ນລົງບໍ່ພໍເທົ່າໃດຊົ່ວໂມງ. ແຕ່ຈິດວິນຍານຂອງຂ້າພະເຈົ້ານັ້ນ ພວກເຂົາເອົາໄປບໍ່ໄດ້. ຜູ້ທີ່ປາຖະໜາທີ່ຈະປະກາດພຣະຄຳຂອງພຣະຄຣິສໃຫ້ແກ່ໂລກ ຕ້ອງພ້ອມຕາຍຢູ່ທຸກເວລາ.”[20] *{GC 134.3}*

ຂ່າວທີ່ລູເທີເດີນທາງມາເຖິງເມືອງອອກເບີກນັ້ນ ເຮັດໃຫ້ຕົວແທນຂອງສັນຕະປາປາມີຄວາມພໍໃຈຫຼາຍ. ເບິ່ງຄືວ່າ, ຄົນນອກຮີດທີ່ປັ່ນປ່ວນປະຊາຊົນ ແລະ ເປັນທີ່ສົນໃຈຂອງຄົນທັງໂລກນັ້ນໄດ້ຕົກຢູ່ໃນມືຂອງຄຣິສຕະຈັກໂຣມແລ້ວ; ຕົວແທນກໍຕັ້ງໃຈວ່າຈະບໍ່ປ່ອຍໃຫ້ເພິ່ນໜີລອດໄປໄດ້. ລູເທີບໍ່ມີໃບຮັບຮອງຄວາມປອດໄພ ແລະ ໝູ່ເພື່ອນຂອງເພິ່ນກໍໄດ້ເຕືອນບໍ່ໃຫ້ເພິ່ນໄປພົບຕົວແທນໂດຍບໍ່ມີໃບຮັບຮອງນີ້. ພວກເຂົາຈຶ່ງອາສາໄປຂໍຈາກຈັກກະພັດ. ຕົວແທນຂອງສັນຕະປາປາຕັ້ງໃຈຈະບັງຄັບໃຫ້ລູເທີປະຕິເສດ

[20] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 4, ບົດ 4.

ຄຳສອນຂອງຕົນຖ້າເປັນໄປໄດ້ ຫຼື ຖ້າບໍ່ສຳເລັດກໍຈະສົ່ງເພີ່ນໄປນະຄອນໂຣມ ເພື່ອຮັບຊະຕາກຳດຽວກັນ ກັບຮັສ ແລະ ເຈໂຣມ. ດັ່ງນັ້ນ, ຕົວແທນຈຶ່ງສົ່ງຄົນໄປຊັກຊວນລູເທີໃຫ້ມາພົບໂດຍບໍ່ຕ້ອງມີໃບຮັບຮອງ ຄວາມປອດໄພ ພຽງແຕ່ໃຫ້ລູເທີໄວ້ວາງໃຈໃນຄວາມເມດຕາຂອງເພີ່ນເທົ່ານັ້ນ. ແຕ່ລູເທີປະຕິເສດຢ່າງ ເດັດຂາດ ແລະ ບໍ່ຍອມໄປປາກົດຕົວຕໍ່ໜ້າຕົວແທນຂອງສັນຕະປາປາ ຈົນກວ່າຈະໄດ້ຮັບເອກະສານ ຢືນຢັນການຄຸ້ມຄອງຈາກຈັກກະພັດເສຍກ່ອນ. *{GC 135.1}*

ພວກຄົນເຄັ່ງໃນລະບອບສັນຕະປາປາໄດ້ວາງອຸບາຍເອົາຊະນະລູເທີ ດ້ວຍການສະແດງທ່າທີອ່ອນ-ໂຍນ. ຕົວແທນຂອງສັນຕະປາປາສະແດງອອກເໝືອນເປັນມິດທີ່ດີໃນເວລາພົບລູເທີ, ແຕ່ໃນຂະນະ ດຽວກັນກໍຮຽກຮ້ອງໃຫ້ເພີ່ນຍອມຮັບອຳນາດຂອງຄຣິສຕະຈັກໂຣມຢ່າງສິ້ນເຊີງ ແລະ ຍອມຈຳນົນໃນ ທຸກປະເດັນໂດຍບໍ່ມີການໂຕ້ແຍ້ງ ຫຼື ການຕັ້ງຄຳຖາມໃດໆ. ແຕ່ເພີ່ນປະເມີນອຸປະນິໄສຂອງລູເທີຜິດ ໄປ. ລູເທີຕອບໂດຍສະແດງຄວາມນັບຖືຕໍ່ຄຣິສຕະຈັກ, ຄວາມປາຖະໜາທີ່ຈະຮູ້ຄວາມຈິງ, ຄວາມພ້ອມ ທີ່ຈະຊີ້ແຈງຂໍ້ຂ້ອງໃຈຕໍ່ຄຳສອນຂອງເພີ່ນ ແລະ ຄວາມຍິນດີທີ່ຈະໃຫ້ມະຫາວິທະຍາໄລຊັ້ນນຳບາງແຫ່ງ ພິຈາລະນາຄຳສອນຂອງເພີ່ນ. ແຕ່ໃນຂະນະດຽວກັນ ລູເທີຄັດຄ້ານການທີ່ພຣະຄາດີນັນຮຽກຮ້ອງໃຫ້ ເພີ່ນຖອນຄຳສອນ ໂດຍບໍ່ໄດ້ພິສູດວ່າຄຳສອນນັ້ນຜິດ. *{GC 135.2}*

ຝ່າຍຕົວແທນຂອງສັນຕະປາປາໄດ້ພຽງແຕ່ຕອບວ່າ: “ຈົ່ງຖອນຄຳຂອງເຈົ້າ, ຈົ່ງຖອນຄຳສອນຂອງ ເຈົ້າສາ!” ລູເທີສະແດງໃຫ້ເຫັນວ່າມີຂໍ້ພຣະຄຳພີຮອງຮັບຈຸດຢືນຂອງຕົນ ແລະ ຢືນຢັນຢ່າງໜັກແໜ້ນ ວ່າ ເພີ່ນບໍ່ສາມາດປະຕິເສດຄວາມຈິງໄດ້. ຕົວແທນຂອງສັນຕະປາປາບໍ່ສາມາດຕອບຂໍ້ໂຕ້ແຍ້ງຂອງລູເທີ ໄດ້ ຈຶ່ງໂຈມຕີເພີ່ນດ້ວຍການຕຳໜິ, ການເຍາะເຍີ້ຍ ແລະ ຄຳປະຈົບປະແຈງ, ພ້ອມທັງອ້າງຄຳສອນ ທີ່ສືບທອດກັນມາ ແລະ ຖ້ອຍຄຳຂອງບັນດານັກຂຽນຄຣິສຕຽນໃນສະຕະວັດຕົ້ນໆ ໂດຍບໍ່ເປີດໂອກາດ ໃຫ້ລູເທີໄດ້ເວົ້າເລີຍ. ເມື່ອເຫັນວ່າການປະຊຸມທີ່ດຳເນີນໄປແບບນີ້ຈະບໍ່ມີປະໂຫຍດຫຍັງ, ລູເທີຈຶ່ງຂໍສະເໜີ ຄຳຕອບເປັນລາຍລັກອັກສອນ ແລະ ໃນທີ່ສຸດ ຕົວແທນຂອງສັນຕະປາປາກໍຍອມອະນຸຍາດແບບບໍ່ເຕັມ ໃຈ. *{GC 136.1}*

ລູເທີຂຽນເຖິງເພື່ອນຄົນໜຶ່ງວ່າ: “ການຕອບດ້ວຍການຂຽນມີປະໂຫຍດສອງຢ່າງສຳລັບຄົນທີ່ຖືກ ກົດຂີ່ຂົ່ມເຫັງ, 1) ສາມາດສົ່ງຄຳຕອບທີ່ຂຽນໄວ້ນັ້ນໃຫ້ຄົນອື່ນພິຈາລະນາ, ແລະ 2) ເຖິງແມ່ນຄຳຕອບ ທີ່ຂຽນໄວ້ຈະບໍ່ເຂົ້າເຖິງຈິດສຳນຶກຂອງຜູ້ປົກຄອງທີ່ຫຍິ່ງຈອງຫອງ ແລະ ເວົ້າຈາໂອ້ອວດຜູ້ນັ້ນ ແຕ່ກໍຍັງ ມີໂອກາດດີກວ່າທີ່ຈະຈູງໃຈເພີ່ນໂດຍອາໄສຄວາມຢ້ານກົວທີ່ມີຢູ່ແລ້ວ ເພາะຖ້າບໍ່ດັ່ງນັ້ນ ເພີ່ນກໍຈະໃຊ້ ຖ້ອຍຄຳອັນອວດດີເພື່ອເອົາຊະນະ.”[21] *{GC 136.2}*

ຕໍ່ມາເມື່ອພົບກັນອີກ ລູເທີໄດ້ຊີ້ແຈງຈຸດຢືນຂອງເພີ່ນຢ່າງແຈ່ມແຈ້ງ, ກະທັດຮັດ ແລະ ມີ ນ້ຳໜັກ ໂດຍອ້າງອີງຂໍ້ພຣະຄຳພີຢ່າງຫຼວງຫຼາຍມາເປັນຫຼັກຖານ. ຫຼັງຈາກອ່ານເອກະສານນັ້ນອອກ ສຽງແລ້ວ ລູເທີກໍມອບໃຫ້ພຣະຄາດີນັນ. ແຕ່ພຣະຄາດີນັນກັບສະແດງຄວາມດູໝິ່ນດ້ວຍການໂຍນ ເອກະສານຖິ້ມ ແລະ ປະກາດວ່າເປັນແຕ່ຖ້ອຍຄຳທີ່ໄຮ້ສາລະ ແລະ ຂໍ້ອ້າງອີງທີ່ບໍ່ກ່ຽວຂ້ອງ. ເມື່ອເຫັນ ດັ່ງນັ້ນ ລູເທີຮູ້ສຶກເດືອດດານຂຶ້ນມາ ຈຶ່ງຫັນໄປໃຊ້ອາວຸດຂອງຝ່າຍກົງກັນຂ້າມ ຄືທຳນຽມ ແລະ ຄຳສອນ ຂອງຄຣິສຕະຈັກ ເພື່ອໜັກລ້າງຈຸດຢືນຂອງພຣະຄາດີນັນຜູ້ຈອງຫອງນັ້ນຈົນຮາບຄາບ. *{GC 136.3}*

ເມື່ອພຣະຄາດີນັນເຫັນວ່າຂໍ້ໂຕ້ແຍ້ງຂອງລູເທີມີເຫດຜົນທີ່ບໍ່ສາມາດຕອບໂຕ້ໄດ້, ເພີ່ນຄວບຄຸມຕົວເອງ ບໍ່ຢູ່ ຈຶ່ງຮ້ອງຂຶ້ນດ້ວຍຄວາມໂກດຮ້າຍວ່າ: “ເຈົ້າຈົ່ງຖອນຄຳສອນເສຍ! ຖ້າບໍ່ຖອນ ຂ້ອຍຈະສົ່ງເຈົ້າ ໄປນະຄອນໂຣມ ເພື່ອປາກົດຕົວຕໍ່ໜ້າຜູ້ພິພາກສາທີ່ຖືກແຕ່ງຕັ້ງໃຫ້ພິຈາລະນາຄະດີຂອງເຈົ້າ. ຂ້ອຍ

[21] ມາຕິນ (Martyn), *ຊີວິດ ແລະ ສະໄໝຂອງລູເທີ*, ໜ້າ 271, 272.

ຈະຕັດເຈົ້າອອກຈາກການເປັນສະມາຊິກຄຣິສຕະຈັກ ພ້ອມທັງພັກພວກຂອງເຈົ້າ ແລະ ທຸກຄົນທີ່ຈະສະໜັບສະໜູນເຈົ້າ ແລະ ຈະຂັບໄລ່ພວກເຂົາອອກຈາກຄຣິສຕະຈັກ.” ສຸດທ້າຍເພິ່ນກໍປະກາດດ້ວຍນ້ຳສຽງຈອງຫອງ ແລະ ໂກດຮ້າຍວ່າ: “ຖອນຄຳສອນເສຍ ຫຼື ຢ່າກັບມາອີກ.”[22] *{GC 136.4}*

ລູເທີພ້ອມດ້ວຍໝູ່ເພື່ອນຈຶ່ງຍ່າງອອກຈາກທີ່ນັ້ນທັນທີ ເຊິ່ງສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ຈະບໍ່ມີການຖອນຄຳສອນແຕ່ຢ່າງໃດ. ນີ້ບໍ່ແມ່ນສິ່ງທີ່ພຣະຄາດີນັນຕັ້ງໃຈໄວ້; ເພິ່ນຫຼົງຄິດວ່າຈະສາມາດໃຊ້ການຂົ່ມຂູ່ບັງຄັບໃຫ້ລູເທີຍອມຈຳນົນ. ບັດນີ້ເຫຼືອແຕ່ພວກທີ່ສະໜັບສະໜູນຕົນ, ເພິ່ນຈຶ່ງເບິ່ງໜ້າພວກເຂົາສະຫຼັບໄປມາດ້ວຍຄວາມອັບອາຍທີ່ສຸດທີ່ແຜນການລົ້ມເຫຼວຢ່າງບໍ່ຄາດຄິດ. *{GC 137.1}*

ຄວາມພະຍາຍາມຂອງລູເທີໃນຄັ້ງນີ້ເກີດຜົນດີຫຼາຍຢ່າງ. ຝູງຊົນຈຳນວນຫຼວງຫຼາຍທີ່ຢູ່ທີ່ນັ້ນໄດ້ມີໂອກາດປຽບທຽບຄົນທັງສອງ ແລະ ຕັດສິນດ້ວຍຕົນເອງເຖິງສະພາບຈິດວິນຍານ ພ້ອມທັງນ້ຳໜັກ ແລະ ຄວາມຈິງຂອງຫຼັກຄຳສອນຂອງແຕ່ລະຝ່າຍ. ຄວາມແຕກຕ່າງນັ້ນປາກົດຢ່າງຊັດເຈນ! ນັກປະຕິຮູບເປັນຄົນລຽບງ່າຍ, ຖ່ອມຕົວ, ໜັກແໜ້ນໝັ້ນຄົງ ແລະ ຢືນຢັດດ້ວຍກຳລັງຈາກພຣະເຈົ້າ ເພາະມີຄວາມຈິງຢູ່ຝ່າຍຕົນ; ສ່ວນຕົວແທນຂອງສັນຕະປາປາເປັນຄົນຫຍິ່ງຈອງຫອງ, ຫຼົງຕົວເອງ, ມັກຂົ່ມເຫັງຜູ້ອື່ນ ແລະ ບໍ່ມີເຫດຜົນ. ເຖິງແມ່ນວ່າບໍ່ມີຂໍ້ພິສູດຈາກພຣະຄຳພີແມ່ນແຕ່ຂໍ້ດຽວ ເພິ່ນກໍຍັງຮ້ອງຢ່າງດຸເດືອດວ່າ: “ຈົ່ງຖອນຄຳສອນຄືນ ຫຼື ຈະຖືກສົ່ງໄປຮັບໂທດທີ່ນະຄອນໂຣມ!” *{GC 137.2}*

ການຫຼົບໜີຂອງລູເທີ

ເຖິງແມ່ນວ່າລູເທີມີໃບຮັບຮອງຄວາມປອດໄພ ແຕ່ພວກເຄັ່ງໃນລະບອບສັນຕະປາປາວາງແຜນທີ່ຈະຈັບເພິ່ນເຂົ້າຄຸກ. ໝູ່ເພື່ອນຂອງເພິ່ນເຫັນວ່າການຢູ່ຕໍ່ໄປບໍ່ມີປະໂຫຍດ ຈຶ່ງຊັກຊວນໃຫ້ເພິ່ນຟ້າວກັບເມືອງວິດເທັນເບີກດ້ວຍຄວາມລະມັດລະວັງບໍ່ໃຫ້ຜູ້ໃດຮູ້ເຈດຕະນາຂອງເພິ່ນ. ດັ່ງນັ້ນ, ລູເທີຈຶ່ງອອກໄປຈາກເມືອງອອກເບີກກ່ອນແຈ້ງ ໂດຍຂີ່ມ້າໄປກັບຜູ້ນຳທາງພຽງຄົນດຽວທີ່ເຈົ້າເມືອງຈັດຫາມາໃຫ້. ດ້ວຍຄວາມວິຕົກກັງວົນຫຼາຍຢ່າງ ເພິ່ນໄດ້ລັກລອບເດີນທາງຜ່ານຖະໜົນທີ່ມືດມິດ ແລະ ງຽບສະຫງັດຂອງເມືອງ. ສັດຕູທີ່ໂຫດຮ້າຍກຳລັງວາງແຜນ ແລະ ຄອຍຈ້ອງທຳລາຍເພິ່ນ. ເພິ່ນຈະຫຼົບໜີກັບດັກທີ່ພວກເຂົາວາງໄວ້ໄດ້ບໍ? ນັ້ນເປັນຊ່ວງເວລາແຫ່ງຄວາມທຸກໃຈ ແລະ ການອະທິຖານຢ່າງຮ້ອນຮົນ. ພໍໄປເຖິງປະຕູນ້ອຍໃນກຳແພງເມືອງ ມີຄົນເປີດປະຕູໃຫ້, ເພິ່ນກັບຜູ້ນຳທາງຈຶ່ງຜ່ານໄປໂດຍບໍ່ມີອຸປະສັກ. ເມື່ອອອກມາຢູ່ນອກກຳແພງຢ່າງປອດໄພ, ພວກເຂົາຈຶ່ງຟ້າວໜີໄປ. ກ່ອນທີ່ຕົວແທນຂອງສັນຕະປາປາຈະຮູ້ວ່າລູເທີໄດ້ຫຼົບໜີ, ເພິ່ນກໍໄດ້ພົ້ນຈາກເງື້ອມມືຂອງຜູ້ຂົ່ມເຫັງໄປແລ້ວ; ຊາຕານ ແລະ ສະໝຸນຂອງມັນຈຶ່ງພ່າຍແພ້. ຄົນທີ່ຝ່າຍຊາຕານຄິດວ່າຢູ່ໃນກຳມືນັ້ນໄດ້ຫາຍໄປເໝືອນນົກທີ່ຫຼຸດພົ້ນຈາກແຮ້ວຂອງນາຍພານ. *{GC 137.3}*

ເມື່ອໄດ້ຮັບຂ່າວການໜີລອດຂອງລູເທີ ຕົວແທນຂອງສັນຕະປາປາກໍຕົກຕະລຶງ ແລະ ໂກດຮ້າຍຫຼາຍທີ່ສຸດ. ເພິ່ນເຄີຍຫວັງວ່າຈະໄດ້ຮັບກຽດຢ່າງສູງຈາກການສະແດງປັນຍາ ແລະ ຄວາມເດັດດ່ຽວໃນການຈັດການກັບຜູ້ສ້າງຄວາມວຸ້ນວາຍໃນຄຣິສຕະຈັກຜູ້ນີ້ ແຕ່ກໍຕ້ອງຜິດຫວັງ. ເພິ່ນຈຶ່ງລະບາຍຄວາມຄຽດແຄ້ນໃນຈົດໝາຍເຖິງທ່ານເຟຣເດີຣິກ (Frederick) ເຈົ້າແຂວງແຊັກຊັນນີ (Saxony),[23] ໂດຍ

[22] ໂດບິນເຍ, ສະບັບຈັດພິມໃນນະຄອນລອນດອນ, ເຫຼັ້ມ 4, ບົດ 8.

[23] ໃນອານາຈັກເຢຍລະມັນສະໄໝນັ້ນ, ເຈົ້າແຂວງບໍ່ແມ່ນເຈົ້າໜ້າທີ່ທີ່ຖືກແຕ່ງຕັ້ງຂຶ້ນ ຫາກແຕ່ເປັນຜູ້ປົກຄອງລັດໜຶ່ງທີ່ໄດ້ຮັບຕຳແໜ່ງສືບທອດຕາມສາຍເລືອດ. ຈັກກະພັດກໍບໍ່ໄດ້ຮັບຕຳແໜ່ງໂດຍການສືບທອດ ຫາກແຕ່ໄດ້ຮັບເລືອກຈາກເຈົ້າແຂວງພຽງເຈັດຄົນເທົ່ານັ້ນ ຕາມກົດໝາຍທີ່ວາງໄວ້ໃນສະຕະວັດທີ 14. ສິດເລືອກນີ້ຜູກຕິດຢູ່ກັບແຂວງ ບໍ່ແມ່ນຜູກຕິດຢູ່ກັບຕົວບຸກຄົນ ຈຶ່ງຕົກທອດ

ກ່າວປະນາມລູເທີຢ່າງຮຸນແຮງ ແລະ ຮຽກຮ້ອງໃຫ້ທ່ານເຟຣເດີຣິກສົ່ງຕົວນັກປະຕິຮູບໄປນະຄອນໂຣມ ຫຼື ຂັບໄລ່ເພິ່ນອອກຈາກແຂວງແຊັກຊັນນີ. *{GC 138.1}*

ລູເທີປົກປ້ອງຕົວເອງດ້ວຍການຂໍໃຫ້ຕົວແທນຂອງສັນຕະປາປາ ຫຼື ສັນຕະປາປາເອງໃຊ້ພຣະຄຳພີຊີ້ໃຫ້ເຫັນຄວາມຜິດຂອງເພິ່ນ. ລູເທີສາບານຢ່າງໜັກແໜ້ນວ່າຈະປະຖິ້ມຄຳສອນຂອງຕົນ ຖ້າພິສູດໄດ້ວ່າຂັດກັບພຣະຄຳຂອງພຣະເຈົ້າ. ນອກຈາກນັ້ນ, ເພິ່ນຍັງຂອບພຣະຄຸນພຣະເຈົ້າ ທີ່ຊົງນັບວ່າເພິ່ນຄູ່ຄວນທີ່ຈະທົນທຸກເພື່ອພາລະກິດອັນສັກສິດເຊັ່ນນີ້. *{GC 138.2}*

ເຈົ້າແຂວງຄຸ້ມຄອງ

ເຖິງຕອນນີ້ ເຈົ້າແຂວງຍັງບໍ່ຄ່ອຍມີຄວາມຮູ້ໃນເລື່ອງຄຳສອນຂອງຝ່າຍປະຕິຮູບສາສະໜາ, ແຕ່ເພິ່ນປະທັບໃຈກັບຖ້ອຍຄຳຂອງລູເທີທີ່ຈິງໃຈ, ມີພະລັງ ແລະ ເຂົ້າໃຈງ່າຍ. ຕາບໃດທີ່ບໍ່ມີການພິສູດວ່າລູເທີມີຄວາມຜິດ ທ່ານເຟຣເດີຣິກຕັດສິນໃຈທີ່ຈະປົກປ້ອງເພິ່ນ. ເຈົ້າແຂວງຊຸນຕອບການຮຽກຮ້ອງຂອງຕົວແທນຂອງສັນຕະປາປາວ່າ: “ເນື່ອງຈາກ ດຣ. ມາຕິນໄດ້ລາຍງານຕົວຕໍ່ໜ້າທ່ານທີ່ເມືອງອອກເບີກແລ້ວ, ທ່ານກໍໜ້າຈະພໍໃຈ. ພວກເຮົາບໍ່ໄດ້ຄາດຄິດເລີຍວ່າ ທ່ານຈະພະຍາຍາມໃຫ້ເພິ່ນຖອນຄຳສອນໂດຍບໍ່ມີການພິສູດວ່າເພິ່ນສອນຜິດ. ບໍ່ມີນັກວິຊາການຄົນໃດໃນແຂວງຂອງພວກເຮົາທີ່ລາຍງານໃຫ້ຂ້າພະເຈົ້າຟັງວ່າ ຄຳສອນຂອງມາຕິນໝິ່ນປະໝາດພຣະເຈົ້າ, ຜິດຕໍ່ຫຼັກການຄຣິສຕຽນ ຫຼື ວ່ານອກຮີດ.” ນອກຈາກນັ້ນ, ເຈົ້າແຂວງຍັງປະຕິເສດທີ່ຈະສົ່ງລູເທີໄປນະຄອນໂຣມ ຫຼື ຂັບໄລ່ລູເທີອອກຈາກດິນແດນການປົກຄອງຂອງຕົນ.[24] *{GC 138.3}*

ເຈົ້າແຂວງເຫັນວ່າການປະພຶດທາງສິນທຳໄດ້ເສື່ອມເສຍລົງໃນສັງຄົມທົ່ວໄປ ແລະ ຕ້ອງມີການປະຕິຮູບຄັ້ງໃຫຍ່. ມາດຕະການທີ່ຊັບຊ້ອນ ແລະ ສິ້ນເປືອງເພື່ອຄວບຄຸມ ແລະ ລົງໂທດອາດຂະຍາກຳຄົງບໍ່ຈຳເປັນ ຖ້າຫາກວ່າຄົນພຽງແຕ່ຍອມຮັບ ແລະ ເຊື່ອຟັງຂໍ້ກຳນົດຂອງພຣະເຈົ້າ ແລະ ການຊີ້ນຳຂອງຈິດສຳນຶກທີ່ໄດ້ຮັບແສງສະຫວ່າງແລ້ວ. ເພິ່ນເຫັນວ່າລູເທີກຳລັງເຮັດວຽກເພື່ອໃຫ້ບັນລຸຈຸດປະສົງນີ້ ເຈົ້າແຂວງຈຶ່ງມີໃຈຊື່ນບານທີ່ເຫັນກະແສຄວາມດີເລີ່ມປາກົດໃນຄຣິສຕະຈັກ. *{GC 138.4}*

ນອກຈາກນັ້ນ, ເຈົ້າແຂວງເຫັນວ່າ ລູເທີປະສົບຜົນສຳເລັດຢ່າງໂດດເດັ່ນໃນຖານະສາດສະດາຈານປະຈຳມະຫາວິທະຍາໄລ. ເຖິງແມ່ນເວລາຈະຜ່ານໄປພຽງປີດຽວຕັ້ງແຕ່ນັກປະຕິຮູບຜູ້ນີ້ໄດ້ຕິດປ້າຍຄຳປະທ້ວງທີ່ປະຕູໂບດໃນຜາສາດຫີນ, ແຕ່ຈຳນວນຄົນທີ່ມາສະແຫວງບຸນທີ່ໂບດໃນເທດສະການບັນດານັກບຸນໃນປີນີ້ຫຼຸດລົງຫຼາຍ. ຄຣິສຕະຈັກໂຣມຂາດຄົນນະມັດສະການ ແລະ ເງິນຖວາຍບໍ່ຫຼາຍເໝືອນແຕ່ກ່ອນ ແຕ່ມີຄົນກຸ່ມໃໝ່ມາແທນທີ່. ປີນີ້ຄົນທີ່ພາກັນມາທີ່ເມືອງວິດເທັນເບີກ ບໍ່ແມ່ນພວກນັກສະແຫວງບຸນທີ່ມາຂາບໄຫວ້ວັດຖຸສັກສິດ ແຕ່ເປັນນັກສຶກສາທີ່ມາຮ່ຳຮຽນ. ງານຊຸນຂອງລູເທີໄດ້ເຮັດໃຫ້ຄົນໃນທຸກແຫ່ງຫັນສົນໃຈໃນພຣະຄຳພີຢ່າງທີ່ພວກເຂົາບໍ່ເຄີຍເປັນມາກ່ອນ, ຈຶ່ງມີນັກສຶກສາພາກັນຫຼັ່ງໄຫຼມາທີ່ມະຫາວິທະຍາໄລ ບໍ່ພຽງແຕ່ຈາກທຸກພາກຂອງເຢຍລະມັນ ແຕ່ຈາກດິນແດນອື່ນດ້ວຍ. ເມື່ອພວກຊາວໜຸ່ມເດີນທາງມາເຫັນເມືອງວິດເທັນເບີກເປັນຄັ້ງທຳອິດກໍຈະ “ຊູມືຂຶ້ນສູ່ຟ້າສະຫວັນ ແລະ ສັນລະເສີນພຣະເຈົ້າທີ່ໃຫ້ແສງແຫ່ງຄວາມຈິງສ່ອງອອກມາຈາກເມືອງນີ້ ເໝືອນດັ່ງເມືອງຊີໂອນໃນສະໄໝບູຮານ ທີ່ເຜີຍແຜ່ຄວາມຈິງອອກໄປຍັງປະເທດທີ່ຫ່າງໄກທີ່ສຸດ.”[25] *{GC 139.1}*

ໄປພ້ອມກັບຕຳແໜ່ງ. ທ່ານເຟຣເດີຣິກເປັນໜຶ່ງໃນເຈົ້າແຂວງເຈັດຄົນນັ້ນ. ດ້ວຍເຫດນີ້, ທັງສັນຕະປາປາ ແລະ ຈັກກະພັດຈຶ່ງບໍ່ອາດບັງຄັບເພິ່ນໄດ້ຕາມໃຈ.

[24] ໂດບິນເຍ, ເຫຼັ້ມ 4, ບົດ 10.

[25] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 4, ບົດ 10.

ຄວາມເຂົ້າໃຈທີ່ກະຈ່າງຂຶ້ນ

ໃນເວລານັ້ນລູເທີຍັງຕິດພັນກັບຄວາມເຊື່ອຜິດໆບາງຢ່າງຂອງຄຣິສຕະຈັກໂຣມ. ແຕ່ເມື່ອເພິ່ນສຶກສາປຽບທຽບພຣະຄຳຂອງພຣະເຈົ້າກັບຄຳສັ່ງ ແລະ ທຳມະນູນຂອງສັນຕະປາປາ, ເພິ່ນຮູ້ສຶກປະຫຼາດໃຈຫຼາຍ. ເພິ່ນຂຽນວ່າ: "ຂ້າພະເຈົ້າກຳລັງອ່ານຄຳສັ່ງທັງຫຼາຍຂອງສັນຕະປາປາໃນສະໄໝຕ່າງໆ; ແລະ . . . ຂ້າພະເຈົ້າບໍ່ແນ່ໃຈວ່າສັນຕະປາປາເປັນຜູ້ຕໍ່ຕ້ານພຣະຄຣິສເອງ (Antichrist) ຫຼື ເປັນທູດຂອງຜູ້ຕໍ່ຕ້ານພຣະຄຣິສ, ເພາະໃນເອກະສານເຫຼົ່ານັ້ນມີການໝິ່ນປະໝາດ ແລະ ບິດເບືອນພຣະລັກສະນະຂອງພຣະຄຣິສຢ່າງຮ້າຍແຮງ ເໝືອນກັບເອົາພຣະອົງໄປຄຶງໄວ້ເທິງໄມ້ກາງແຂນ."[26] ເຖິງຢ່າງໃດກໍຕາມ, ໃນຂະນະນັ້ນລູເທີຍັງສະໜັບສະໜູນຄຣິສຕະຈັກໂຣມຢູ່ ແລະ ບໍ່ເຄີຍຄິດວ່າຈະແຍກອອກຈາກຄຣິສຕະຈັກນັ້ນ. *{GC 139.2}*

ບົດຂຽນ ແລະ ຄຳສອນຂອງລູເທີໄດ້ແຜ່ໄປທົ່ວທຸກປະເທດທີ່ມີການນັບຖືສາສະໜາຄຣິສ. ຂະບວນການນີ້ໄດ້ຂະຫຍາຍໄປເຖິງສວິສເຊີແລນ ແລະ ຮໍແລນ. ມີການນຳບົດຂຽນຂອງເພິ່ນເຂົ້າໄປເຖິງປະເທດຝຣັ່ງ ແລະ ແອັດສະປາຍ (Spain). ຢູ່ອັງກິດ ປະຊາຊົນຮັບເອົາຄຳສອນຂອງເພິ່ນເໝືອນດັ່ງພຣະທຳແຫ່ງຊີວິດ. ຄວາມຈິງໄດ້ແຜ່ຂະຫຍາຍໄປເຖິງປະເທດແບນຊິກ (Belgium) ແລະ ອິຕາລີເຊັ່ນກັນ. ມີຄົນນັບພັນນັບໝື່ນທີ່ເຄີຍຕົກຢູ່ໃນຄວາມມືດງົ້ງທາງຈິດວິນຍານເໝືອນຄົນຕາຍ ກໍໄດ້ຕື່ນຂຶ້ນມາສູ່ຄວາມຊົມຊື່ນຍິນດີ ແລະ ຄວາມຫວັງໃນຊີວິດທີ່ດຳລົງຢູ່ດ້ວຍຄວາມເຊື່ອ. *{GC 139.3}*

ການໂຈມຕີຂອງລູເທີເຮັດໃຫ້ບັນດາຜູ້ນຳຄຣິສຕະຈັກໂຣມຄຸງດແຄ້ນເພີ່ມຂຶ້ນເລື້ອຍໆ, ຈົນພວກຜູ້ຄັດຄ້ານທີ່ຄັ່ງໄຄ້ບາງຄົນ, ລວມທັງສາດສະດາຈານໃນມະຫາວິທະຍາໄລກາໂຕລິກ ໄດ້ປະກາດວ່າຜູ້ທີ່ຂ້ານັກບວດຜູ້ກະບົດຄົນນີ້ຈະບໍ່ຖືວ່າມີບາບ. ມື້ໜຶ່ງມີຊາຍແປກໜ້າຄົນໜຶ່ງທີ່ເຊື່ອງປືນໄວ້ໃຕ້ເສື້ອຄຸມໄດ້ເຂົ້າມາຫາລູເທີ ແລ້ວຖາມວ່າເປັນຫຍັງເພິ່ນຈຶ່ງຢ່າງມາລຳພັງ. ລູເທີຕອບວ່າ: "ຂ້ອຍຢູ່ໃນພຣະຫັດຂອງພຣະເຈົ້າ, ພຣະອົງຊົງເປັນກຳລັງ ແລະ ເປັນໂລ້ປ້ອງກັນຂອງຂ້ອຍ. ມະນຸດຈະເຮັດສິ່ງໃດແກ່ຂ້ອຍໄດ້?"[27] ເມື່ອໄດ້ຍິນຄຳຕອບຂອງລູເທີ ຊາຍຜູ້ນັ້ນກໍໜ້າຊີດດ້ວຍຄວາມຢ້ານກົວ ແລ້ວຟ້າວແລ່ນໜີໄປຄືກັບວ່າກຳລັງປົບໜີຈາກເງົ້າທູດສະຫວັນ. *{GC 140.1}*

ໃນຂະນະທີ່ຄຣິສຕະຈັກໂຣມມຸ່ງໝັ້ນທີ່ຈະທຳລາຍລູເທີ, ພຣະເຈົ້າຊົງເປັນຜູ້ປົກປ້ອງເພິ່ນ. ຄຳສອນຂອງເພິ່ນໄດ້ແຜ່ກະຈາຍໄປທົ່ວທຸກບ່ອນ, "ທັງໃນກະຕູບນ້ອຍ ແລະ ສຳນັກນັກບວດ, . . . ໃນຜາສາດຫີນຂອງຊຸນນາງ, ໃນມະຫາວິທະຍາໄລ ແລະ ໃນພຣະຣາຊວັງຂອງກະສັດ." ມີຊຸນນາງຫຼາຍຄົນໄດ້ພາກັນອອກມາສະໜັບສະໜູນວຽກງານຂອງເພິ່ນຢ່າງເປີດເຜີຍ.[28] *{GC 140.2}*

ໃນຊ່ວງເວລານັ້ນ, ລູເທີໄດ້ອ່ານບົງການຂຽນຂອງຮັສ ແລະ ພົບວ່າຫຼັກຄວາມຈິງອັນສຳຄັນເລື່ອງຄວາມຊອບທຳໂດຍຄວາມເຊື່ອທີ່ຕົນພະຍາຍາມຮັກສາ ແລະ ສັ່ງສອນນັ້ນ ແມ່ນເລື່ອງດຽວກັນກັບທີ່ຮັສ ນັກປະຕິຮູບຊາວໂບຮີເມຍ ເຄີຍຢຶດຖືມາກ່ອນ. ເພິ່ນກ່າວວ່າ: "ພວກເຮົາທຸກຄົນຮວມທັງໂປໂລ, ອໍກັສຕິນ (Augustine) ແລະ ຂ້າພະເຈົ້າເອງໄດ້ເປັນພວກດຽວກັບຮັສໂດຍບໍ່ຮູ້ຕົວ!" ແລ້ວກໍກ່າວຕື່ມວ່າ: "ພຣະເຈົ້າຈະຊົງພິພາກສາໂລກແນ່ນອນ ເພາະຫຼັກຄວາມຈິງຖືກປະກາດໃນສະຕະວັດທີ່ແລ້ວ ແຕ່ຊາວໂລກໄດ້ເຜົາມັນຖິ້ມ!"[29] *{GC 140.3}*

---

[26] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 5, ບົດ 1.
[27] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 6, ບົດ 2.
[28] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 6, ບົດ 2.
[29] ໄວລີ (Wylie), ເຫຼັ້ມ 6, ບົດ 1.

ວິກິດຂອງຂະບວນການປະຕິຮູບ

ໃນການຮ້ອງຂໍຕໍ່ຈັກກະພັດ ແລະ ພວກຂຸນນາງຊາວເຢຍລະມັນໃຫ້ສະໜັບສະໜູນການປະຕິຮູບ ຄຣິສຕະສາສະໜາ, ລູເທີໄດ້ຂຽນກ່ຽວກັບສັນຕະປາປາວ່າ: “ເປັນທີ່ໜ້າຕົກໃຈທີ່ຈະເຫັນຜູ້ທີ່ອວດອ້າງ ວ່າເປັນຕົວແທນຂອງພຣະຄຣິສ ສະແດງຄວາມໜູຫຼາທີ່ບໍ່ມີຈັກກະພັດອົງໃດທຽບເທົ່າ. ນີ້ບໍ່ຄ້າຍຄື ພຣະເຢຊູຜູ້ທຸກຍາກ ຫຼື ເປໂຕຜູ້ຕ່ຳຕ້ອຍເລີຍ. ຄົນມັກອ້າງວ່າສັນຕະປາປາເປັນເຈົ້າຊີວິດປົກຄອງ ໂລກ! ສັນຕະປາປາອວດອ້າງວ່າເພີ່ນເປັນຕົວແທນຂອງພຣະຄຣິສ ແຕ່ພຣະຄຣິສຜູ້ທີ່ເພີ່ນອວດອ້າງ ນັ້ນຊົງກ່າວວ່າ: ‘ອານາຈັກຂອງເຮົາບໍ່ເປັນຂອງໂລກນີ້.’ (ໂຢຮັນ 18:36). ແລ້ວຈະເປັນໄປໄດ້ຈັ່ງໃດທີ່ ຂອບເຂດອຳນາດຂອງຕົວແທນຈະຍິ່ງໃຫຍ່ກວ່າເຈົ້ານາຍຂອງຕົນ?”[30] *{GC 140.4}*

ກ່ຽວກັບມະຫາວິທະຍາໄລທັ່ງຫຼາຍ ລູເທີໄດ້ຂຽນດັ່ງນີ້: “ຂ້າພະເຈົ້າຢ້ານວ່າ ມະຫາວິທະຍາໄລ ທັ່ງຫຼາຍຈະກາຍເປັນປະຕູໃຫຍ່ທີ່ນຳໄປສູ່ນະຮົກ ເວັ້ນເສຍແຕ່ພວກເຂົາຈະທຸ້ມເທໃນການອະທິບາຍ ພຣະຄຳພີ ແລະ ຈາລຶກພຣະຄຳໄວ້ໃນຈິດໃຈຂອງຊາວໜຸ່ມ. ຂ້າພະເຈົ້າບໍ່ແນະນຳໃຫ້ຜູ້ໃດສົ່ງລູກໄປບ່ອນ ທີ່ພຣະຄຳພີບໍ່ໄດ້ເປັນສິ່ງສຳຄັນທີ່ສຸດ. ທຸກສະຖາບັນທີ່ບໍ່ໄດ້ຈົດຈໍ່ກັບພຣະຄຳຂອງພຣະເຈົ້າຢ່າງຕໍ່ເນື່ອງ ຈະຕ້ອງເສື່ອມໂຊມລົງໃນທີ່ສຸດ.”[31] *{GC 140.5}*

ຄຳຮຽກຮ້ອງນີ້ໄດ້ແຜ່ກະຈາຍໄປທົ່ວປະເທດເຢຍລະມັນຢ່າງໄວວາ ແລະ ເປັນອິດທິພົນທີ່ມີພະລັງຕໍ່ ປະຊາຊົນ. ທົ່ວທັ້ງປະເທດຖືກປຸກລະດົມ ແລະ ຜູ້ຄົນຈຳນວນຫຼວງຫຼາຍໄດ້ລຸກຂຶ້ນມາສະໜັບສະໜູນ ຂະບວນການປະຕິຮູບ. ບັນດາຜູ້ຕໍ່ຕ້ານລູເທີທີ່ມີໃຈຢາກແກ້ແຄ້ນຢ່າງແຮງກ້າ ໄດ້ກົດດັນໃຫ້ສັນຕະປາປາ ດຳເນີນການຢ່າງເດັດຂາດຕໍ່ເພີ່ນ. ມີຄຳສັ່ງອອກມາໃຫ້ປະນາມຄຳສອນຂອງເພີ່ນໂດຍທັນທີ. ສັນຕະ-ປາປາໃຫ້ເວລາ 60 ວັນສຳລັບລູເທີກັບຜູ້ຕິດຕາມເພີ່ນ ຫາກພວກເຂົາບໍ່ຍອມຖອນຄຳສອນພາຍໃນ ເວລາກຳນົດ ທຸກຄົນກໍຈະຖືກຕັດອອກຈາກຄຣິສຕະຈັກ. *{GC 141.1}*

ຄາວນັ້ນເປັນວິກິດການອັນຮ້າຍແຮງທີ່ສຸດສຳລັບຂະບວນການປະຕິຮູບ. ເປັນເວລາຫຼາຍສະຕະວັດ ມາແລ້ວ ທີ່ຄຳສັ່ງຕັດຊື່ຄົນອອກຈາກຄຣິສຕະຈັກໂຣມ ເຮັດໃຫ້ບັນດາກະສັດຜູ້ຊົງອຳນາດສະທ້ານ ຢ້ານກົວ ແລະ ນຳຄວາມທຸກລຳບາກພ້ອມກັບຄວາມພິນາດມາສູ່ອານາຈັກອັນຍິ່ງໃຫຍ່ຫຼາຍແຫ່ງ. ຜູ້ ທີ່ຖືກຕັດຊື່ອອກນັ້ນ ມັກຖືກຄົນທັ່ງປວງຫວາດກົວ. ພວກເຂົາຖືກຕັດຂາດຈາກການຕິດຕໍ່ພົວພັນ ກັບຄົນອື່ນ ແລະ ຖືກປະຕິບັດເໝືອນເປັນອາດຊະຍາກອນທີ່ຕ້ອງຖືກໄລ່ລ່າທຳລາຍ. ລູເທີຮູ້ດີເຖິງ ພະຍຸທີ່ກຳລັງຈະໂຫມກະໜ່ຳໃສ່ຕົນ ແຕ່ເພິ່ນຢືນຢັດໝັ້ນຄົງດ້ວຍຄວາມໄວ້ວາງໃຈວ່າພຣະຄຣິສຈະຊົງ ຄ້ຳຊູ ແລະ ປົກປ້ອງເພີ່ນ. ດ້ວຍຄວາມເຊື່ອ ແລະ ຄວາມກ້າຫານແບບຜູ້ພ້ອມຕາຍເພື່ອຄວາມເຊື່ອ ເພີ່ນ ຂຽນວ່າ: “ຂ້າພະເຈົ້າບໍ່ຮູ້ວ່າຈະເກີດຫຍັງຂຶ້ນ ແລະ ກໍບໍ່ສົນໃຈດ້ວຍ; . . . ມັນຈະກະທົບຢ່າງໃດກໍຂໍໃຫ້ມັນ ກະທົບໂລດ. ຂ້າພະເຈົ້າບໍ່ຢ້ານ ເພາະວ່າແມ່ນແຕ່ໃບໄມ້ອັນໜຶ່ງກໍບໍ່ໄດ້ຫຼົ່ນລົງມາຈາກຕົ້ນ ນອກຈາກເປັນ ນ້ຳພຣະໄທຂອງພຣະບິດາ. ພຣະອົງຈະຍິ່ງເບິ່ງແຍງເອົາໃຈໃສ່ພວກເຮົາໜ້ອຍໜ້ອຍໃດ! ການຕາຍເພື່ອພຣະທຳ ເປັນເລື່ອງເລັກນ້ອຍ ເພາະພຣະທຳນັ້ນໄດ້ກາຍເປັນມະນຸດ ແລະ ຊົງປະສົບກັບຄວາມຕາຍດ້ວຍ ພຣະອົງເອງ. ຖ້າພວກເຮົາຕາຍກັບພຣະອົງ ເຮົາກໍຈະມີຊີວິດຢູ່ກັບພຣະອົງ, ເຮົາຈະຜ່ານປະສົບການທີ່ ພຣະອົງຊົງຜ່ານກ່ອນໜ້າເຮົາ ແລະ ຈະຢູ່ກັບພຣະອົງຕະຫຼອດໄປເປັນນິດ.”[32] *{GC 141.2}*

ເມື່ອໃບປະກາດພິເສດຂອງສັນຕະປາປາມາເຖິງລູເທີ ເພິ່ນກ່າວວ່າ: “ຂ້າພະເຈົ້າດູໝິ່ນ ແລະ ຕໍ່ຕ້ານ ໃບປະກາດນີ້ ເພາະມັນເປັນການໝິ່ນປະໝາດ ແລະ ບໍ່ເປັນຄວາມຈິງ; . . . ມັນໄດ້ກ່າວໂທດ*ອົງພຣະ-*

[30] ໂດບິນເຍ, ເຫຼັ້ມ 6, ບົດ 3.

[31] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 6, ບົດ 3.

[32] ໂດບິນເຍ, ເຫຼັ້ມ 6, ບົດ 9, ຕີພິມຄັ້ງທີ 3 ໃນ ຄ.ສ. 1840 ທີ່ລອນດອນໂດຍນາຍພິມວັນເທີ.

ຄຣິສ. . . . ຂ້າພະເຈົ້າມີຄວາມຊົມຊື່ນຍິນດີທີ່ໄດ້ທົນທຸກເພື່ອພາລະກິດອັນປະເສີດທີ່ສຸດນີ້. ບັດນີ້ຂ້າພະເຈົ້າ ຮູ້ສຶກໂລ່ງໃຈຫຼາຍຂຶ້ນ ເພາະໃນທີ່ສຸດຂ້າພະເຈົ້າຮູ້ວ່າສັນຕະປາປາແມ່ນຜູ້ຕໍ່ຕ້ານພຣະຄຣິສ ແລະ ບັນລັງ ຂອງເພິ່ນແມ່ນບັນລັງຂອງຊາຕານເອງ.”[33] *{GC 141.3}*

ເຖິງຢ່າງໃດກໍຕາມ, ຄຳສັ່ງຂອງຄຣິສຕະຈັກໂຣມສົ່ງຜົນກະທົບບໍ່ຫຼາຍກໍໜ້ອຍ ເພາະມີອາວຸດທີ່ ມີສັກກະຍະພາບໃນການບັງຄັບຄົນໃຫ້ຍອມຈຳນົນ ກໍຄື ການຂັງຄຸກ, ການທໍລະມານ ແລະ ຄົມ ດາບ. ຜູ້ອ່ອນແອ ແລະ ຜູ້ງົມງວາຍພາກັນຫວັ່ນໄຫວຕໍ່ຄຳສັ່ງຂອງສັນຕະປາປາ. ເຖິງວ່າຄົນສ່ວນຫຼາຍ ເຫັນອົກເຫັນໃຈລູເທີກໍຕາມ, ແຕ່ມີຫຼາຍຄົນຮູ້ສຶກວ່າຊີວິດມີຄ່າເກີນກວ່າທີ່ຈະສ່ຽງເພື່ອການປະຕິຮູບ. ທຸກ ຢ່າງເບິ່ງຄືວ່າວຽກງານການປະຕິຮູບຂອງລູເທີກຳລັງຈະສິ້ນສຸດລົງ. *{GC 142.1}*

ແຍກຈາກຄຣິສຕະຈັກໂຣມຢ່າງສົມບູນ

ແຕ່ລູເທີຍັງຄົງຢືນໝັ້ນບໍ່ຫວັ່ນໄຫວ. ຄຣິສຕະຈັກໂຣມອອກຄຳປະກາດສາບແຊ່ງໃຫ້ເພີ່ມຕົກນະຣົກ ຊ້ຳແລ້ວຊ້ຳອີກ ໃນຂະນະທີ່ຄົນທັງໂລກຈັບຕາເບິ່ງ, ທຸກຄົນຄາດວ່າເພິ່ນຈະຕ້ອງຈົບຫາຍຢ່າງແນ່ນອນ ຫຼື ຈະຖືກບັງຄັບໃຫ້ຍອມຈຳນົນ. ແຕ່ເພິ່ນໄດ້ປະນາມຄຣິສຕະຈັກໂຣມຄືນດ້ວຍຄວາມເດັດດ່ຽວອັນ ແຮງກ້າ ແລະ ປະກາດຢ່າງເປີດເຜີຍວ່າ ຈະແຍກອອກຈາກຄຣິສຕະຈັກໂຣມຕະຫຼອດໄປ. ລູເທີເອົາ ເອກະສານຕ່າງ ໆ ຂອງຄຣິສຕະຈັກໂຣມມາເຜົາຖິ້ມຕໍ່ໜ້າຝູງຊົນທີ່ປະກອບດ້ວຍນັກສຶກສາ, ສາດສະດາ-ຈານ ແລະ ປະຊາຊົນທຸກຊັ້ນຄົນ. ໃນເອກະສານເຫຼົ່ານັ້ນມີທັງໃບປະກາດພິເສດ ແລະ ຄຳຕັດສິນ ຂອງສັນຕະປາປາ, ກົດລະບຽບຂອງຄຣິສຕະຈັກໂຣມ ແລະ ບົດຄວາມທີ່ສະໜັບສະໜຸນອຳນາດຂອງ ສັນຕະປາປາ. ເພິ່ນກ່າວວ່າ: “ສັດຕູຂອງຂ້າພະເຈົ້າໄດ້ເຜົາໜັງສືຂອງຂ້າພະເຈົ້າຖິ້ມ ເພື່ອທຳລາຍ ພາລະກິດການປະກາດຫຼັກຄວາມຈິງໃນສາຍຕາຂອງປະຊາຊົນ ແລະ ທຳລາຍຈິດວິນຍານຂອງພວກ ເຂົາ. ເພາະເຫດນີ້, ຂ້າພະເຈົ້າຈຶ່ງເອົາຄືນ ແລະ ເຜົາໜັງສືຂອງພວກເຂົາຖິ້ມເຊັ່ນກັນ. ນີ້ເປັນການ ເລີ່ມຕົ້ນຂອງການຕໍ່ສູ້ທີ່ສຳຄັນ. ກ່ອນໜ້ານີ້ຂ້າພະເຈົ້າພຽງແຕ່ຫຼິ້ນກັບສັນຕະປາປາ. ຂ້າພະເຈົ້າໄດ້ເລີ່ມ ງານນີ້ດ້ວຍພຣະນາມຂອງພຣະເຈົ້າ ແລະ ພຣະອົງຈະຊົງກະທຳໃຫ້ສຳເລັດດ້ວຍຣິດທານຸພາບຂອງ ພຣະອົງ ໂດຍບໍ່ຈຳເປັນຕ້ອງມີຂ້າພະເຈົ້າ.”[34] *{GC 142.2}*

ເມື່ອພວກສັດຕູເຍາะເຍີ້ຍຖາກຖາງວ່າພາລະກິດຂອງເພິ່ນອ່ອນແອ, ລູເທີຕອບວ່າ: “ໃຜຈະຮູ້ແນ່ວ່າ ພຣະເຈົ້າບໍ່ໄດ້ເລືອກ ແລະ ຮຽກເອີ້ນຂ້າພະເຈົ້າ? ພວກເຂົາບໍ່ຢ້ານບໍວ່າ ໃນການດູຖູກຂ້າພະເຈົ້າ ພວກ ເຂົາກຳລັງດູຖູກພຣະເຈົ້າ? ໂມເຊຢູ່ຄົນດຽວເມື່ອນຳຄົນອິດສະຣາເອນອອກຈາກປະເທດເອຢິບ, ເອລີຢາ ຢືນຢູ່ຄົນດຽວໃນສະໄໝຂອງກະສັດອາຮາບ, ເອຊາຢາຢູ່ຄົນດຽວໃນເຢຣູຊາເລັມ, ເອເຊກຽນຢູ່ຄົນດຽວທີ່ ບາບີໂລນ. . . . ພຣະເຈົ້າບໍ່ເຄີຍເລືອກມະຫາປະໂຣຫິດ ຫຼື ບຸກຄົນສຳຄັນມາເປັນຜູ້ເຜີຍພຣະທຳ, ແຕ່ ສ່ວນຫຼາຍພຣະອົງຊົງເລືອກຜູ້ທີ່ຕ່ຳຕ້ອຍ ແລະ ຖືກສັງຄົມໝິ່ນປະໝາດ, ຢ່າງກໍລະນີຂອງອາໂມດ ຜູ້ລ້ຽງແກະ. ໃນທຸກຍຸກທຸກສະໄໝຄົນຂອງພຣະເຈົ້າຕ້ອງສ່ຽງຊີວິດເພື່ອຕັກເຕືອນຜູ້ຍິ່ງໃຫຍ່, ທັງ ກະສັດ, ຂຸນນາງ, ປະໂຣຫິດ ແລະ ນັກປາດ. . . . ຂ້າພະເຈົ້າບໍ່ໄດ້ອວດອ້າງວ່າຕົນເປັນຜູ້ເຜີຍພຣະ-ທຳ, ແຕ່ຂ້າພະເຈົ້າເວົ້າວ່າພວກເຂົາຄວນຢ້ານກົວຍ້ອນຂ້າພະເຈົ້າຢູ່ຄົນດຽວ ໃນຂະນະທີ່ພວກເຂົາ ມີຫຼາຍຄົນ. ຂ້າພະເຈົ້າໝັ້ນໃຈວ່າພຣະຄຳຂອງພຣະເຈົ້າຢູ່ກັບຂ້າພະເຈົ້າ ແລະ ບໍ່ໄດ້ຢູ່ກັບພວກ ເຂົາ.”[35] *{GC 142.3}*

[33] ໂດບິນເຍ, ເຫຼັ້ມ 6, ບົດ 9.
[34] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 6, ບົດ 10.
[35] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 6, ບົດ 10.

ເຖິງຢ່າງໃດກໍຕາມ, ມີການຕໍ່ສູ້ຢ່າງສາຫັດໃນໃຈຂອງລູເທີ ກ່ອນທີ່ລາວຈະຕັດສິນໃຈແຍກຕົວອອກຈາກ ຄຣິສຕະຈັກໂຣມຢ່າງເດັດຂາດ. ໃນຊ່ວງເວລານັ້ນເພິ່ນໄດ້ຂຽນວ່າ: “ນັບມື້ຂ້າພະເຈົ້າຍິ່ງເຫັນເຖິງຄວາມ ຍາກລຳບາກໃນການປະຖິ້ມຫຼັກການທີ່ຊຶມຊັບມາເມື່ອຕອນເປັນເດັກ. ເຖິງແມ່ນວ່າມີພຣະຄຳພີເປັນ ຫຼັກຖານ, ແຕ່ມັນທໍລະມານໃຈຫຼາຍແທ້ໆ ທີ່ຈະຍອມຮັບວ່າຂ້າພະເຈົ້າຕ້ອງຢືນຂຶ້ນຕໍ່ຕ້ານສັນຕະປາປາ ພຽງຜູ້ດຽວ ແລະ ປະກາດວ່າເພິ່ນເປັນຜູ້ຕໍ່ຕ້ານພຣະຄຣິສ! ຈິດໃຈຂອງຂ້າພະເຈົ້າທໍລະມານຫຼາຍ ແທ້! ຫຼາຍເທື່ອທີ່ຂ້າພະເຈົ້າຖາມຕົນເອງດ້ວຍຄວາມຂົມຂື່ນໃນຄຳຖາມທີ່ພວກຝ່າຍສັນຕະປາປາມັກ ຖາມນັ້ນວ່າ: ‘ເຈົ້າສະຫຼາດຢູ່ຜູ້ດຽວຫຼື? ຄົນທັງໂລກເຂົ້າໃຈຜິດຊັ້ນບໍ? ແລ້ວຈະເປັນແນວໃດຖ້າຫາກວ່າເຈົ້າ ເອງເປັນຜູ້ຜິດ ແລະ ພາຄົນອື່ນຫຼົງຜິດນຳ, ເຊິ່ງພວກເຂົາຈະຕ້ອງຖືກລົງໂທດຕະຫຼອດໄປ?’ ຂ້າພະເຈົ້າ ໄດ້ຕໍ່ສູ້ກັບຕົນເອງ ແລະ ກັບຊາຕານຢ່າງນີ້ແຫຼະ ຈົນພຣະຄຣິສໄດ້ປະທານກຳລັງໃຈດ້ວຍພຣະຄຳອັນ ບໍ່ມີຜິດພ້ຽນຂອງພຣະອົງ ເພື່ອເອົາຊະນະຄວາມສົງໄສເຫຼົ່ານີ້.”[36] *{GC 143.1}*

ສັນຕະປາປາໄດ້ຂົ່ມຂູ່ລູເທີວ່າຈະຕັດເພິ່ນອອກຈາກຄຣິສຕະຈັກ ຖ້າເພິ່ນບໍ່ຖອນຄຳສອນ, ບັດນີ້ ການຂົ່ມຂູ່ນັ້ນກໍສຳເລັດ. ສັນຕະປາປາອອກໃບປະກາດພິເສດສະບັບໃໝ່ທີ່ກ່າວວ່າ ລູເທີໄດ້ຖືກຕັດອອກ ຈາກຄຣິສຕະຈັກໂຣມຢ່າງເດັດຂາດ ແລະ ປະນາມເພິ່ນວ່າເປັນຜູ້ທີ່ສະຫວັນສາບແຊ່ງ. ສ່ວນທຸກຄົນທີ່ ເຊື່ອຖືຄຳສອນຂອງເພິ່ນກໍຈະຖືກສາບແຊ່ງແບບດຽວກັນ. ບັດນີ້ທັງສອງຝ່າຍໄດ້ເຂົ້າສູ່ການຕໍ່ສູ້ຢ່າງເຕັມ ຮູບແບບແລ້ວ. *{GC 143.2}*

ຊາວໂລກງຸງດຊັງຄວາມຈິງ

ທຸກຄົນທີ່ພຣະເຈົ້າຊົງໃຊ້ໃຫ້ປະກາດຫຼັກຄວາມຈິງພິເສດສຳລັບຍຸກສະໄໝຂອງເຂົາຈະຕ້ອງພົບກັບ ການຕໍ່ຕ້ານສະເໝີ. ໃນສະໄໝຂອງລູເທີມີຫຼັກຄວາມຈິງທີ່ເໝາະສົມກັບຍຸກນັ້ນ ເຊິ່ງເປັນຄວາມຈິງທີ່ ສຳຄັນເປັນພິເສດ. ຄຣິສຕະຈັກໃນປັດຈຸບັນກໍມີຄວາມຈິງທີ່ສຳຄັນສຳລັບຍຸກນີ້ເຊັ່ນກັນ. ພຣະເຈົ້າຜູ້ ຊົງກະທຳທຸກສິ່ງຕາມນ້ຳພຣະໄທຂອງພຣະອົງ ຊົງຈັດວາງໃຫ້ມະນຸດຢູ່ໃນສະຖານະການທີ່ແຕກຕ່າງ ກັນ ແລະ ມອບໜ້າທີ່ໃຫ້ພວກເຂົາທີ່ເໝາະສົມກັບຍຸກສະໄໝຂອງແຕ່ລະຄົນ. ຖ້າພວກເຂົາເຫັນ ຄຸນຄ່າຂອງແສງສະຫວ່າງທີ່ພຣະອົງປະທານໃຫ້ ພວກເຂົາກໍຈະເຂົ້າໃຈຄວາມຈິງໄດ້ຢ່າງເລິກເຊິ່ງຍິ່ງ ຂຶ້ນ. ແຕ່ຄົນສ່ວນຫຼາຍໃນປັດຈຸບັນບໍ່ປາຖະໜາຄວາມຈິງ ບໍ່ຕ່າງຈາກພວກນິຍົມສັນຕະປາປາທີ່ ຕໍ່ຕ້ານລູເທີໃນສະໄໝກ່ອນ. ຄົນໃນປັດຈຸບັນກໍຍັງມີນິໄສແບບດຽວກັນກັບຄົນໃນສະໄໝກ່ອນທີ່ຮັບເອົາ ທິດສະດີ ແລະ ຮີດຄອງປະເພນີຂອງມະນຸດແທນພຣະຄຳຂອງພຣະເຈົ້າ. ຜູ້ທີ່ປະກາດຄວາມຈິງສຳລັບ ຍຸກນີ້ ບໍ່ຄວນຄາດຫວັງວ່າຈະໄດ້ຮັບການຕ້ອນຮັບດີກ່ວານັກປະຕິຮູບໃນອະດີດ. ການຕໍ່ສູ້ອັນຍິ່ງໃຫຍ່ ລະຫວ່າງຄວາມຈິງກັບຄວາມບໍ່ຈິງ, ລະຫວ່າງພຣະຄຣິສກັບຊາຕານຈະເພີ່ມຄວາມຮຸນແຮງຂຶ້ນເລື້ອຍໆ ຈົນເຖິງວາລະສຸດທ້າຍຂອງປະຫວັດສາດໂລກ. *{GC 143.3}*

ພຣະເຢຊູຊົງກ່າວແກ່ພວກສາວົກຂອງພຣະອົງວ່າ: “ຖ້າເຈົ້າທັງຫຼາຍເປັນຝ່າຍໂລກ ໂລກກໍຈະ ຮັກແພງສິ່ງທີ່ເປັນຂອງມັນ, ແຕ່ເພາະເຈົ້າທັງຫຼາຍບໍ່ເປັນຂອງຝ່າຍໂລກ ແລະ ຝ່າຍເຮົາໄດ້ເລືອກເອົາ ພວກເຈົ້າອອກຈາກໂລກນີ້ ເພາະສະນັ້ນ ໂລກຈຶ່ງງຸງດຊັງພວກເຈົ້າ. ຈົ່ງລະນຶກເຖິງຂໍ້ຄວາມທີ່ເຮົາໄດ້ ບອກພວກເຈົ້າວ່າ, ‘ຂ້ອຍໃຊ້ບໍ່ຫ່ອນໃຫຍ່ກ່ວານາຍຂອງຕົນ.’ ຖ້າພວກເຂົາຂົ່ມເຫັງເຮົາ ພວກເຂົາຈະ ຂົ່ມເຫັງເຈົ້າທັງຫຼາຍເໝືອນກັນ. ຖ້າພວກເຂົາເຊື່ອຟັງຖ້ອຍຄຳຂອງເຮົາ ພວກເຂົາກໍຈະເຊື່ອຟັງຖ້ອຍຄຳ ຂອງພວກເຈົ້າເໝືອນກັນ.” (ໂຢຮັນ 15:19, 20). ພຣະອົງຊົງກ່າວຢ່າງແຈ່ມແຈ້ງວ່າ: “ວິບັດມີແກ່ ພວກເຈົ້າ ເມື່ອມີຄົນຍ້ອງຍໍວ່າ ພວກເຈົ້າດີ ເພາະບັນພະບຸລຸດຂອງພວກເຂົາກໍໄດ້ເວົ້າຢ່າງດຽວກັນ

[36] ມາຕິນ (Martyn), ໜ້າ 372, 373.

ນີ້ແຫຼະແກ່ພວກຜູ້ປະກາດພຣະທຳປອມ.” (ລູກາ 6:26). ກະແສນິຍົມຂອງຊາວໂລກໃນປັດຈຸບັນ ບໍ່ມີຄວາມສອດຄ່ອງກັບພຣະວິນຍານຂອງພຣະຄຣິສຫຼາຍກວ່າສະໄໝກ່ອນ ແລະ ຄົນທີ່ປະກາດພຣະຄຳຂອງພຣະເຈົ້າຢ່າງຖືກຕ້ອງບໍຣິສຸດ ຈະບໍ່ໄດ້ຮັບການຍົກຍ້ອງຫຼາຍກວ່າຜູ້ຮັບໃຊ້ຂອງພຣະອົງໃນຍຸກກ່ອນ. ຮູບແບບການຕໍ່ຕ້ານຫຼັກຄວາມຈິງອາດປ່ຽນແປງ, ການເປັນສັດຕູອາດຈະບໍ່ໄດ້ໂຈ່ງແຈ້ງເພາະມັນແອບແຝງຫຼາຍຂຶ້ນ, ແຕ່ການຕໍ່ຕ້ານແບບດຽວກັນນີ້ຍັງຄົງມີຢູ່ ແລະ ຈະມີຕໍ່ໄປຈົນເຖິງວັນສິ້ນໂລກ. *{GC 144.1}*

8

ລູເທີຕໍ່ໜ້າສະພາ

ພ້ອມໃຈຢືນຢັດ

ມີຈັກກະພັດອົງໃໝ່ຂຶ້ນຄອງອານາຈັກເຢຍລະມັນຊື່ວ່າ ຊານສ໌ທີ 5 (Charles V); ມີຄະນະທູດຈາກນະຄອນໂຣມຟ້າວໄປສະແດງຄວາມຍິນດີນຳ ແລະ ຂໍຮ້ອງໃຫ້ເພີ່ນຕໍ່ສູ້ຂະບວນການປະຕິຮູບຢ່າງເຕັມອຳນາດ. ໃນຂະນະດຽວກັນ ເຈົ້າແຂວງແຊັກຊັນນີໄດ້ວິງວອນຈັກກະພັດ ບໍ່ໃຫ້ກະທຳສິ່ງໃດຕໍ່ຕ້ານລູເທີຈົນກວ່າຈະມີການໄຕ່ສວນຄັກແນ່. ເຈົ້າແຂວງຜູ້ນີ້ເປັນໜຶ່ງໃນຜູ້ມີສິດເລືອກຈັກກະພັດ[1] ແລະ ຢູ່ເບື້ອງຫຼັງການຂຶ້ນຄອງຣາຊສົມບັດຄັ້ງນີ້. ອົງຈັກກະພັດຈຶ່ງເປັນໜີ້ບຸນຄຸນເຈົ້າແຂວງຢູ່ພໍດີ ແລະ ຕົກຢູ່ໃນສະພາບທີ່ກືນບໍ່ເຂົ້າຄາຍບໍ່ອອກ ຈະເລືອກທາງໃດກໍມີແຕ່ຈະຕ້ອງຂາຍໜ້າ. ພວກທີ່ຢູ່ຝ່າຍສັນຕະປາປາຈະບໍ່ພໍໃຈ ນອກເສຍຈາກຈັກກະພັດຈະອອກຄຳສັ່ງໃຫ້ປະຫານຊີວິດລູເທີ. ສ່ວນເຈົ້າແຂວງນັ້ນໄດ້ກ່າວຢ່າງໜັກແໜ້ນວ່າ: “ບໍ່ມີໃຜສະແດງໃຫ້ເຫັນວ່າ ງານຂຽນຂອງລູເທີມີຄວາມຜິດ ບໍ່ວ່າອົງຈັກກະພັດເອງ ຫຼື ຄົນອື່ນ.” ສະນັ້ນ, ເຈົ້າແຂວງຈຶ່ງຂໍ “ໃຫ້ອອກໃບຮັບຮອງຄວາມປອດໄພແກ່ ດຣ. ລູເທີ ເພື່ອເພິ່ນຈະໄດ້ລາຍງານຕົວຕໍ່ໜ້າຄະນະຕຸລາການທີ່ເປັນກາງ ແລະ ປະກອບດ້ວຍຄົນທີ່ມີຄວາມຮອບຮູ້ ແລະ ມີສິນລະທຳ.”[2] *{GC 145.1}*

ບັດນີ້ຄົນທຸກຝ່າຍພາກັນຫັນຄວາມສົນໃຈໄປທີ່ສະພາແຫ່ງຊາດ ອັນປະກອບດ້ວຍບັນດາເຈົ້າແຂວງຈາກທຸກແຂວງຂອງອານາຈັກເຢຍລະມັນ; ສະພາດັ່ງກ່າວຈັດຂຶ້ນໃນເມືອງເວີມ (Worms) ບໍ່ດົນຫຼັງຈາກທີ່ຈັກກະພັດຊານສ໌ຂຶ້ນຄອງອຳນາດ. ມີປະເດັນສຳຄັນທາງການເມືອງທີ່ສະພາແຫ່ງຊາດຕ້ອງພິຈາລະນາ ແລະ ເປັນໂອກາດທຳອິດທີ່ພວກເຈົ້າແຂວງຂອງເຢຍລະມັນຈະໄດ້ພົບກັບຈັກກະພັດໜຸ່ມໃນກອງປະຊຸມສະພາເຊັ່ນນີ້. ມີເຈົ້າໜ້າທີ່ຜູ້ຫຼັກຜູ້ໃຫຍ່ທັງຝ່າຍຄຣິສຕະຈັກ ແລະ ຝ່າຍການປົກຄອງທີ່ພາກັນມາຈາກທົ່ວທຸກພາກຂອງອານາຈັກ. ມີພວກເຈົ້າແຂວງ ແລະ ຂຸນນາງຕະກູນດີມີອຳນາດໃຫຍ່ໂຕທີ່ເປັນຫ່ວງໃນສິດທິຂອງຕະກູນ, ມີຜູ້ນຳຄຣິສຕະຈັກທີ່ຫຍິ່ງໃນສັກສີ ແລະ ຕຳແໜ່ງທີ່ມີອຳນາດສູງກວ່າຄົນອື່ນ, ພວກອັດສະວິນພ້ອມດ້ວຍອົງຄະລັກທີ່ຖືອາວຸດ ແລະ ຄະນະທູດຈາກປະເທດໃກ້ຄຽງ ແລະ ດິນແດນຫ່າງໄກ: ທັງໝົດນີ້ຮວມຕົວກັນທີ່ເມືອງເວີມ. ແຕ່ທ່າມກາງກອງປະຊຸມທີ່ມີຄົນຈຳນວນຫຼວງຫຼາຍນັ້ນ ສິ່ງທີ່ຜູ້ຄົນສົນໃຈທີ່ສຸດຄືເລື່ອງລາວຂອງ ມາຕິນ ລູເທີ ນັກປະຕິຮູບຊາວແຊັກຊັນ. *{GC 145.2}*

---

[1] ຈັກກະພັດແຫ່ງອານາຈັກເຢຍລະມັນບໍ່ໄດ້ຮັບຕຳແໜ່ງໂດຍການສືບທອດຕາມສາຍເລືອດ, ຫາກແຕ່ໄດ້ຮັບເລືອກຈາກຜູ້ມີສິດເລືອກພຽງເຈັດຄົນເທົ່ານັ້ນ ເຊິ່ງມີທັງເຈົ້າແຂວງ ແລະ ເຈົ້າຄະນະໃຫຍ່. ທ່ານເຟຣເດີຣິກ ເຈົ້າແຂວງແຊັກຊັນນີ ເປັນໜຶ່ງໃນເຈັດຄົນນັ້ນ ແລະ ເປັນຜູ້ທີ່ຢູ່ເບື້ອງຫຼັງການເລືອກຊານສ໌ທີ 5 ຂຶ້ນເປັນຈັກກະພັດ. ດ້ວຍເຫດນີ້, ຈັກກະພັດອົງໃໝ່ຈຶ່ງບໍ່ອາດປະຕິເສດຄຳຂໍຂອງເພິ່ນໄດ້ງ່າຍໆ.

[2] ໂດບິນເຍ (D’Aubigné), ເຫຼັ້ມ 6, ບົດ 11.

ຈັກກະພັດຊານສ໌ໄດ້ສັ່ງໄວ້ ໃຫ້ເຈົ້າແຂວງພາລູເທີມາທີ່ປະຊຸມສະພາ ໂດຍຢືນຢັນວ່າຈະຄຸ້ມຄອງຄວາມປອດໄພ ແລະ ສັນຍາວ່າຈະໃຫ້ມີການອະພິປາຍກັນຢ່າງເປັນອິດສະຫຼະ ເຖິງປະເດັນຕ່າງໆ ທີ່ກຳລັງມີການຖົກຖຽງກັນຢູ່ໃນຂະນະນັ້ນ ໂດຍທີ່ຝ່າຍໂຕ້ແຍ້ງຈະຕ້ອງເປັນຄົນທີ່ມີຄວາມສາມາດ. ສ່ວນລູເທີກໍມີຄວາມຮ້ອນໃຈຢາກເຂົ້າເຝົ້າຈັກກະພັດ. ເຖິງແມ່ນວ່າສຸຂະພາບຂອງເພິ່ນຈະບໍ່ຄ່ອຍດີໃນເວລານັ້ນ ເພິ່ນຂຽນເຖິງເຈົ້າແຂວງວ່າ: “ຖ້າຂ້າພະເຈົ້າບໍ່ສາມາດໄປທີ່ເມືອງເວີມໃນຂະນະທີ່ມີສຸຂະພາບແຂງແຮງ ກໍຈະໃຫ້ຄົນຫາມຂ້າພະເຈົ້າໄປ, ເພາະວ່າຖ້າຈັກກະພັດຮຽກເອີ້ນແລ້ວ ຂ້າພະເຈົ້າໝັ້ນໃຈວ່າ ນັ້ນກໍເປັນການຮຽກເອີ້ນຂອງພຣະເຈົ້າ. ພວກເຂົາບໍ່ໄດ້ຂໍໃຫ້ຂ້າພະເຈົ້າໄປເພື່ອຈະອົບຮົມສັ່ງສອນພວກເຂົາ, ສະນັ້ນ ເປັນໄປໄດ້ສູງທີ່ພວກເຂົາຈະໃຊ້ຄວາມຮຸນແຮງກັບຂ້າພະເຈົ້າ. ຖ້າເປັນເຊັ່ນນັ້ນ, ຂ້າພະເຈົ້າຂໍມອບເລື່ອງນີ້ໄວ້ໃນພຣະຫັດຂອງພຣະເຈົ້າ, ພຣະອົງຜູ້ຊົງຮັກສາຊີວິດຂອງຊາວໜຸ່ມສາມຄົນໃນເຕົາໄຟຍັງຊົງພຣະຊົນຢູ່ ແລະ ຊົງຄອບຄອງຢູ່, ຖ້າພຣະອົງຈະບໍ່ຊ່ວຍຊີວິດຂອງຂ້າພະເຈົ້າ, ຊີວິດຂອງຂ້າພະເຈົ້າບໍ່ໄດ້ສຳຄັນຫຼາຍ. ຂໍພຽງຢ່າງດຽວ, ຢ່າໃຫ້ຄົນຊົ່ວດູຖູກຂ່າວປະເສີດ, ໃຫ້ພວກເຮົາຍອມສະຫຼະເລືອດເພື່ອຂ່າວປະເສີດ ແລະ ເພື່ອບໍ່ໃຫ້ພວກເຂົາຊະນະ. ບໍ່ແມ່ນໜ້າທີ່ຂອງຂ້າພະເຈົ້າທີ່ຈະຕັດສິນວ່າ ລະຫວ່າງ ຊີວິດ ແລະ ການຕາຍຂອງຂ້າພະເຈົ້ານັ້ນ ອັນໃດຈະຊ່ວຍໃຫ້ມີຄົນລອດພົ້ນຫຼາຍທີ່ສຸດ. . . . ທ່ານສາມາດຄາດຫວັງທຸກສິ່ງຈາກຂ້າພະເຈົ້າໄດ້ . . . ຍົກເວັ້ນການຫຼົບໜີ ຫຼື ການຖອນຄຳສອນຄືນ. ຂ້າພະເຈົ້າໜີບໍ່ໄດ້, ສ່ວນການຖອນຄຳສອນນັ້ນກໍຍິ່ງເປັນໄປບໍ່ໄດ້ເລີຍ.”[3] *{GC 146.1}*

ທ່ານອະລີອັນເດີຕໍ່ຕ້ານ

ປະຊາຊົນພາກັນຕື່ນເຕັ້ນເມື່ອຂ່າວທີ່ລູເທີຈະໄປລາຍງານຕົວຕໍ່ໜ້າສະພານັ້ນໄດ້ແຜ່ກະຈາຍໄປທົ່ວເມືອງເວີມ. ຕົວແທນຂອງສັນຕະປາປາທີ່ຮັບມອບໝາຍໃຫ້ດຳເນີນການໃນຄະດີນີ້ຊື່ວ່າ ອະລີອັນເດີ (Aleander), ລາວທັງຕົກໃຈທັງໂກດຮ້າຍກັບຂ່າວດັ່ງກ່າວ. ລາວເຫັນວ່າຝ່າຍສັນຕະປາປາຈະເສຍຫາຍຫຼາຍຖ້າໃຫ້ລູເທີລາຍງານຕົວຕໍ່ສະພາ, ເພາະການພິຈາລະນາຄະດີທີ່ສັນຕະປາປາປະກາດຄຳຕັດສິນໄປຮຽບຮ້ອຍແລ້ວກໍຈະເປັນການດູຖູກອຳນາດຂອງສັນຕະປາປາ. ຊ້ຳບໍ່ໜຳ, ລາວຢ້ານວ່າຖ້ອຍຄຳທີ່ຄົມຄາຍ ແລະ ເຫດຜົນທີ່ສຽບແຫຼມຂອງລູເທີຈະເປັນເຫດໃຫ້ເຈົ້າແຂວງຫຼາຍຄົນຢຸດການສະໜັບສະໜູນສັນຕະປາປາ. ສະນັ້ນ, ລາວຈຶ່ງຄັດຄ້ານຢ່າງຮຸນແຮງ ແລະ ຂໍຮ້ອງຈັກກະພັດບໍ່ໃຫ້ລູເທີເຂົ້າສະພາທີ່ເມືອງເວີມ. ໃນຊ່ວງນີ້, ມີການຕິດໃບປະກາດພິເສດຂອງສັນຕະປາປາທີ່ຕັດລູເທີອອກຈາກການເປັນສະມາຊິກຄຣິສຕະຈັກ, ເຊິ່ງເລື່ອງນີ້ບວກກັບຖ້ອຍຄຳຂອງອະລີອັນເດີ ໄດ້ໂນ້ມນ້າວຈັກກະພັດຈົນສຳເລັດ. ຈັກກະພັດຊານສ໌ຂຽນຈົດໝາຍໄປເຖິງເຈົ້າແຂວງວ່າ ຖ້າລູເທີບໍ່ຍອມຖອນຄຳສອນກໍຈະຕ້ອງຢູ່ຕໍ່ທີ່ເມືອງວິດເທັນເບີກ. *{GC 146.2}*

ແຕ່ອະລີອັນເດີບໍ່ພໍໃຈກັບໄຊຊະນະຄັ້ງນີ້, ລາວຈຶ່ງພະຍາຍາມສຸດກຳລັງຄວາມສາມາດ ເພື່ອໃຫ້ລູເທີຖືກຕັດສິນລົງໂທດ. ແທນທີ່ຈະທຸ້ມເທກຳລັງເຮັດໃນສິ່ງທີ່ດີງາມ ລາວກັບຟ້ອງລູເທີຕໍ່ໜ້າພວກເຈົ້າແຂວງ, ຜູ້ນຳຄຣິສຕະຈັກ ແລະ ສະມາຊິກສະພາຄົນອື່ນວ່າລູເທີໄດ້ “ສ້າງຄວາມແຕກແຍກ, ກໍ່ກະບົດ, ໝິ່ນປະໝາດພຣະເຈົ້າ ແລະ ເຮັດຜິດຕໍ່ຫຼັກສິນລະທຳ.” ແຕ່ຄວາມໃຈຮ້ອນຢ່າງຮຸນແຮງຂອງອະລີອັນເດີ ໄດ້ເປີດເຜີຍຈິດໃຈຂອງລາວ. ຄົນທົ່ວໄປຈຶ່ງກ່າວວ່າ: “ລາວເຮັດດ້ວຍຄວາມກຽດຊັງ ແລະ

[3] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 1.

ການຜູກແຄ້ນ ຫຼາຍກວ່າຄວາມກະຕືລືລົ້ນ ຫຼື ຄວາມປາຖະໜາທີ່ຈະເຮັດຕາມຫຼັກສິນລະທຳ.”[4] ຄົນສ່ວນຫຼາຍໃນສະພາຈຶ່ງເອນອ່ຽງທີ່ຈະເຂົ້າຂ້າງລູເທີຫຼາຍກວ່າເກົ່າ. *{GC 147.1}*

ອະລີອັນເດີຈຶ່ງເພີ່ມຄວາມພະຍາຍາມເປັນສອງເທົ່າ ເພື່ອໂນ້ມນ້າວຈັກກະພັດເຖິງໜ້າທີ່ທີ່ຈະດຳເນີນການຕາມໃບປະກາດພິເສດຂອງສັນຕະປາປາ. ແຕ່ຕາມກົດໝາຍຂອງເຢຍລະມັນແລ້ວບໍ່ສາມາດເຮັດໄດ້ ນອກຈາກພວກເຈົ້າແຂວງຈະເຫັນດີ; ໃນທີ່ສຸດການຮຽກຮ້ອງຂອງອະລີອັນເດີໄດ້ຜົນ ແລະ ຈັກກະພັດຊານສ໌ຈຶ່ງອະນຸຍາດໃຫ້ລາວນຳເລື່ອງໄປສະເໜີຕໍ່ສະພາ. “ວັນນັ້ນເປັນວັນທີ່ພາກພູມໃຈສຳລັບຕົວແທນຂອງສັນຕະປາປາ, ປະຊຸມນັ້ນຍິ່ງໃຫຍ່, ແຕ່ປະເດັນຄວາມຂັດແຍ້ງຍິ່ງໃຫຍ່ກວ່າ. ອະລີອັນເດີເຮັດໜ້າທີ່ເປັນທະນາຍຝ່າຍໂຣມ . . . ເຊິ່ງເປັນມານດາຂອງຄຣິສຕະຈັກທັງຫຼາຍ ແລະ ເປັນນາຍຜູ້ຍິ່ງໃຫຍ່ຂອງຊຸມນຸມຜູ້ເຊື່ອທັງປວງ.” ມີຄົນສຳຄັນຝ່າຍການປົກຄອງຈາກບັນດາປະເທດທີ່ນັບຖືສາສະໜາຄຣິສຢູ່ທີ່ສະພາໃນຄັ້ງນັ້ນ ແລະ ອະລີອັນເດີມີໜ້າທີ່ພິສູດຕໍ່ໜ້າເຂົາທັງຫຼາຍວ່າ ອັກຄະສາວົກເປໂຕເປັນເຈົ້ານາຍສູງສຸດຂອງຄຣິສຕະຈັກ. “[ອະລີອັນເດີ] ມີພອນສະຫວັນໃນການເວົ້າຢ່າງຄ່ອງແຄ້ວ, ລາວຈຶ່ງຮວບຮວມໝົດຄວາມສາມາດເພື່ອເຫດການອັນສຳຄັນນີ້. ກ່ອນທີ່ຄຣິສຕະຈັກໂຣມຈະຖືກປະກາດກ່າວໂທດ, ພຣະເຈົ້າຊົງນຳໃຫ້ນັກໂຕ້ວາທີທີ່ເກັ່ງທີ່ສຸດຂອງພວກເຂົາເປັນຄົນທີ່ມາແກ້ຕ່າງໃຫ້ຄຣິສຕະຈັກໂຣມຕໍ່ໜ້າສະພາສູງ.”[5] ສ່ວນຄົນທີ່ສະໜັບສະໜູນລູເທີນັ້ນ ກຳຢ້ານສິ່ງທີ່ຈະເກີດຂຶ້ນຈາກຖ້ອຍຄຳຂອງອະລີອັນເດີ. ເຈົ້າແຂວງແຊັກຊັນນີບໍ່ຢູ່, ແຕ່ເພິ່ນສັ່ງໃຫ້ທີ່ປຶກສາບາງຄົນຂອງເພິ່ນຈົດບັນທຶກຖ້ອຍຄຳຂອງຕົວແທນຜູ້ນີ້ໄວ້. *{GC 147.2}*

ອະລີອັນເດີຮວບຮວມຄວາມຮູ້ທັງໝົດທີ່ມີຢູ່ ແລະ ໃຊ້ວາທະສິນຢ່າງເຕັມຄວາມສາມາດເພື່ອເອົາຊະນະຫຼັກຄວາມຈິງ. ລາວຕັ້ງຂໍ້ກ່າວຫາຕໍ່ລູເທີຫຼາຍຂໍ້ຢ່າງຕໍ່ເນື່ອງວ່າ ລູເທີເປັນປໍລະປັກຕໍ່ຄຣິສຕະຈັກ ແລະ ເປັນສັດຕູຕໍ່ອຳນາດລັດ, ເປັນຄູ່ຕໍ່ສູ້ທັງຄົນເປັນ ແລະ ຄົນຕາຍ, ເປັນຄູ່ກຳລະນີຂອງພວກບາດຫຼວງ ແລະ ປະຊາຊົນ, ແລະ ເປັນຄູ່ຂັດແຍ້ງຕໍ່ສະພາຄຣິສຕະຈັກ ແລະ ຕໍ່ຄຣິສຕຽນທຸກຄົນ. ລາວກ່າວວ່າ: “ໃນຄວາມຜິດທັງໝົດຂອງລູເທີນັ້ນ ມີຄວາມຜິດພຽງພໍທີ່ຈະອະນຸມັດໃຫ້ປະຫານຊີວິດຄົນນອກຮີດໜຶ່ງແສນຄົນດ້ວຍການເຜົາໄຟ.” *{GC 148.1}*

ລາວປິດທ້າຍດ້ວຍຄວາມພະຍາຍາມໂນ້ມນ້າວຜູ້ຟັງໃຫ້ດູຖູກຄົນທັງຫຼາຍທີ່ຢຶດຖືຫຼັກການປະຕິຮູບນັ້ນ ໂດຍກ່າວວ່າ: “ພວກສາວົກຂອງລູເທີແມ່ນໃຜ? ເປັນແກ້ງອັນທະພານທີ່ປະກອບດ້ວຍນາຍຄູບ້ານນອກທີ່ອວດດີ, ບາດຫຼວງທີ່ສິ້ນໂກງ, ນັກບວດທີ່ໄຮ້ສິນລະທຳ, ນັກກົດໝາຍທີ່ຂາດຄວາມຮູ້, ຊຸນນາງທີ່ເສຍຍົດ ແລະ ປະຊາຊົນທີ່ພວກເຂົາຫຼອກລວງໃຫ້ຫຼົງຜິດ. ຝ່າຍຄຣິສຕະຈັກກາໂຕລິກມີຄົນຫຼາຍກວ່າພວກເຂົາເປັນຈຳນວນມະຫາສານ ທັງມີຄວາມສາມາດ ແລະ ອຳນາດຫຼາຍກວ່າ! ຂໍໃຫ້ສະພາອັນຊົງກຽດແຫ່ງນີ້ລົງມະຕິເປັນເອກະສັນ ເພື່ອໃຫ້ຄວາມກະຈ່າງແຈ້ງແກ່ຜູ້ຮູ້ນ້ອຍ, ຕັກເຕືອນຄົນທີ່ບໍ່ຮອບຄອບ, ຊ່ວຍຄົນສອງຈິດສອງໃຈໃຫ້ຕັດສິນໃຈຢ່າງຖືກຕ້ອງ ແລະ ໜູນກຳລັງໃຫ້ແກ່ຄົນທີ່ອ່ອນແອ.”[6] *{GC 148.2}*

ຄົນທີ່ປະກາດຄວາມຈິງໃນທຸກຍຸກທຸກສະໄໝໄດ້ຖືກໂຈມຕີດ້ວຍອາວຸດປະເພດນີ້ແຫຼະ. ໃນປັດຈຸບັນນີ້ມີການໃຊ້ຄຳໂຕ້ແຍ້ງແບບດຽວກັນ ເພື່ອຕໍ່ຕ້ານທຸກຄົນທີ່ກ້າຄັດຄ້ານຄວາມເທັດທີ່ຄົນສ່ວນໃຫຍ່ເຊື່ອຢ່າງໜຽວແໜ້ນ ດ້ວຍການນຳສະເໜີຄຳສອນທີ່ແຈ່ມແຈ້ງກົງໄປກົງມາຈາກພຣະຄຳຂອງພຣະເຈົ້າ. ຄົນທີ່ຢາກໄດ້ສາສະໜາອັນເປັນທີ່ນິຍົມຂອງຄົນໃນສັງຄົມຖາມຂຶ້ນວ່າ: “ພວກທີ່ມາເທດສະໜາຄຳສອນ

[4] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 1.

[5] ໄວລີ (Wylie), ເຫຼັ້ມ 6, ບົດ 4.

[6] ໂດບິນເຍ, ເຫຼັ້ມ 7, ບົດ 3.

ໃໝ່ນັ້ນແມ່ນໃຜ? ເປັນຄົນຈຳນວນໜ້ອຍທີ່ຍາກຈົນ ແລະ ໄຮ້ການສຶກສາ, ແຕ່ກັບອ້າງວ່າເປັນພວກທີ່ມີຫຼັກຄວາມຈິງ ແລະ ເປັນໄພ່ພົນຂອງພຣະເຈົ້າທີ່ພຣະອົງຊົງເລືອກໄວ້. ຄົນເຫຼົ່ານີ້ຂາດຄວາມຮູ້ ແລະ ຖືກຫຼອກລວງ. ເບິ່ງແມ! ຄຣິສຕະຈັກຂອງພວກເຮົາມີຈຳນວນຄົນ ແລະ ມີອິດທິພົນຫຼາຍກວ່າພວກເຂົາຢ່າງຫຼວງຫຼາຍທີ່ສຸດ! ມີຄົນສຳຄັນ ແລະ ນັກວິຊາການຫຼາຍຄົນຢູ່ຝ່າຍພວກເຮົາ! ມີອຳນາດມະຫາສານຢູ່ຝ່າຍພວກເຮົາ!” ຊາວໂລກນິຍົມຟັງຂໍ້ໂຕ້ແຍ້ງແບບນີ້ ແຕ່ໃນປັດຈຸບັນຄຳເຫຼົ່ານີ້ບໍ່ສາມາດພິສູດຫຍັງໄດ້ເລີຍ ບໍ່ຕ່າງຫຍັງກັບໃນສະໄໝຂອງລູເທີນັກປະຕິຮູບລຸ້ນບຸກເບີກ. *{GC 148.3}*

ການປະຕິຮູບຄັ້ງສຳຄັນນັ້ນ ບໍ່ໄດ້ສິ້ນສຸດທີ່ລູເທີຢ່າງທີ່ຫຼາຍຄົນເຂົ້າໃຈ, ແຕ່ເປັນຂະບວນການທີ່ຕ້ອງສືບຕໍ່ຈົນເຖິງວັນສິ້ນໂລກ. ລູເທີມີວຽກງານສຳຄັນໃນການສະທ້ອນແສງສະຫວ່າງທີ່ພຣະເຈົ້າສ່ອງມາຍັງເພິ່ນໃຫ້ຄົນອື່ນ, ແຕ່ເພິ່ນບໍ່ໄດ້ຮັບແສງແຫ່ງຄວາມຈິງທັງໝົດທີ່ພຣະເຈົ້າຈະປະທານໃຫ້ແກ່ມະນຸດສະໂລກ. ຕັ້ງແຕ່ສະໄໝຂອງລູເທີເຖິງປັດຈຸບັນ ພຣະເຈົ້າຊົງເປີດເຜີຍຫຼັກຄວາມຈິງໃນປະເດັນໃໝ່ຈາກພຣະຄຳພີມາເລື້ອຍ ໆ ແລະ ມີຄວາມກະຈ່າງແຈ້ງໃນຫຼັກຄວາມຈິງເຫຼົ່ານັ້ນຢ່າງຕໍ່ເນື່ອງ. *{GC 148.4}*

ທ່ານດະຍຸກຈອດຈ໌ຕອບໂຕ້

ຄົນສ່ວນຫຼາຍໃນສະພາປະທັບໃຈໃນຖ້ອຍຄຳຂອງອະລີອັນເດີ. ລູເທີບໍ່ໄດ້ຢູ່ທີ່ນັ້ນຈຶ່ງບໍ່ມີໂອກາດນຳສະເໜີຫຼັກຄວາມຈິງທີ່ແຈ່ມແຈ້ງ ແລະ ມີນ້ຳໜັກຈາກພຣະຄຳຂອງພຣະເຈົ້າ ເພື່ອຊະນະນັກໂຕ້ວາທີຝ່າຍສັນຕະປາປາ. ບໍ່ມີໃຜລຸກຂຶ້ນກ່າວປົກປ້ອງລູເທີ, ແຕ່ກົງກັນຂ້າມ, ພວກເຂົາບໍ່ພຽງຄິດທີ່ຈະກ່າວໂທດລູເທີກັບຄຳສອນຂອງເພິ່ນ, ແຕ່ຍັງຄິດທີ່ຈະທຳລາຍຂະບວນການນອກຮີດໃຫ້ໝົດສິ້ນ ແບບຖອນຮາກຖອນໂຄນ. ຄຣິສຕະຈັກໂຣມໄດ້ໂອກາດທີ່ດີທີ່ສຸດເພື່ອປ້ອງກັນຕົວເອງ. ທຸກສິ່ງທີ່ສາມາດເວົ້າໄດ້ເພື່ອປົກປ້ອງຄຣິສຕະຈັກໂຣມກໍໄດ້ກ່າວໄວ້ໃນທີ່ປະຊຸມແລ້ວ. ແຕ່ສິ່ງທີ່ເບິ່ງເປັນໄຊຊະນະຂອງພວກເຂົາ ທີ່ຈິງເປັນສັນຍານຂອງຄວາມປະລາໄຊ. ຕັ້ງແຕ່ນັ້ນມາ ຄວາມແຕກຕ່າງລະຫວ່າງຄວາມຈິງ ແລະ ຄວາມເທັດກໍປາກົດໃຫ້ເຫັນຢ່າງຈະແຈ້ງຂຶ້ນ ໃນຂະນະທີ່ທັງສອງຝ່າຍຕໍ່ສູ້ຢ່າງເປີດເຜີຍ. ຕັ້ງແຕ່ວັນນັ້ນມາ, ຄຣິສຕະຈັກໂຣມບໍ່ເຄີຍເຂັ້ມແຂງເໝືອນແຕ່ກ່ອນ. *{GC 149.1}*

ເຖິງແມ່ນວ່າສະມາຊິກສະພາສ່ວນໃຫຍ່ຈະບໍ່ລັງເລທີ່ຈະມອບລູເທີໃຫ້ຄຣິສຕະຈັກໂຣມແກ້ແຄ້ນ, ແຕ່ມີຫຼາຍຄົນເຫັນສະພາບທີ່ເສື່ອມເສຍຂອງຄຣິສຕະຈັກ ແລະ ຮູ້ສຶກບໍ່ພໍໃຈ. ພວກເຂົາປາຖະໜາໃຫ້ມີການບັນເທົາທຸກໃຫ້ແກ່ປະຊາຊົນຊາວເຢຍລະມັນທີ່ຕ້ອງທົນຢູ່ກັບການສໍ້ໂກງ ແລະ ຄວາມໂລບຂອງພວກຜູ້ນຳຄຣິສຕະຈັກ. ຕົວແທນຂອງສັນຕະປາປາໄດ້ບັນລະຍາຍເຖິງການປົກຄອງຂອງສັນຕະປາປາໃຫ້ເຫັນແຕ່ແງ່ດີ. ບັດນີ້, ພຣະເຈົ້າຊົງດົນໃຈສະມາຊິກສະພາຄົນໜຶ່ງ ໃຫ້ແຈ້ງເຜີນຮ້າຍຂອງການປົກຄອງແບບຜະເດັດການຂອງສັນຕະປາປາຢ່າງລະອຽດຖີ່ຖ້ວນ. ທ່ານດະຍຸກຈອດຈ໌[7] (Duke George) ຜູ້ປົກຄອງອີກເຂດໜຶ່ງຂອງແຊັກຊັນນີ ໄດ້ລຸກຂຶ້ນທ່າມກາງທີ່ປະຊຸມແຫ່ງຊາດ ເພື່ອລະບຸການຫຼອກລວງ ແລະ ຄວາມຊົ່ວຊ້າຂອງລະບອບສັນຕະປາປາເປັນຂໍ້ ໆ ຢ່າງໜັກແໜ້ນໝັ້ນຄົງ ພ້ອມກ່າວເຖິງຜົນອັນຮ້າຍແຮງຈາກສິ່ງເຫຼົ່ານັ້ນ. ເພິ່ນປິດທ້າຍດ້ວຍການກ່າວວ່າ: *{GC 149.2}*

[7] ດະຍຸກ (Duke) ເປັນຕຳແໜ່ງຜູ້ປົກຄອງເຂດແດນທີ່ສືບທອດທາງສາຍເລືອດພາຍໃຕ້ຈັກກະພັດ ແຕ່ບໍ່ມີສິດເລືອກຈັກກະພັດ. ໃນເວລານັ້ນແຊັກຊັນນີແບ່ງອອກເປັນສອງເຂດ: ເຂດໜຶ່ງປົກຄອງໂດຍທ່ານດະຍຸກຈອດຈ໌ ແລະ ອີກເຂດໜຶ່ງປົກຄອງໂດຍທ່ານເຟຣເດີຣິກ ເຈົ້າແຂວງຜູ້ມີສິດເລືອກຈັກກະພັດ ຜູ້ປົກປ້ອງລູເທີ. ທ່ານດະຍຸກຈອດຈ໌ເອງບໍ່ໄດ້ສະໜັບສະໜູນລູເທີ, ແຕ່ເພິ່ນກໍຍັງກ່າວປະນາມການສໍ້ໂກງຂອງລະບອບສັນຕະປາປາ.

“ຂໍ້ເຫຼົ່ານີ້ເປັນພຽງສ່ວນໜຶ່ງຂອງການລະເມີດຂອງຄຣິສຕະຈັກໂຣມ. ພວກເຂົາໜ້າດ້ານໄຮ້ຢາງອາຍ ແລະ ມີເປົ້າໝາຍຢ່າງດຽວຄື . . . ເງິນ, ເງິນ ແລະ ກໍເງິນ . . . ຈົນມີນັກເທດທີ່ມີໜ້າທີ່ສອນຄວາມຈິງ ພັດກ່າວແຕ່ເລື່ອງທີ່ເປັນເທັດ. ສ່ວນຄຣິສຕະຈັກບໍ່ພຽງແຕ່ຍອມໃຫ້ພວກເຂົາເທດສະໜາຕໍ່ໄປ ແຕ່ຍັງໃຫ້ ລາງວັນພວກເຂົາອີກຊ້ຳ ເພາະວ່າການເວົ້າຕົວະຂອງຄົນເຫຼົ່ານີ້ຫຼາຍສ່ຳໃດ ຜົນກຳໄລຂອງພວກເຂົາກໍ ຫຼາຍຂຶ້ນສ່ຳນັ້ນ. ຕົ້ນນ້ຳເນົ່າເຮັດໃຫ້ນ້ຳໃນລຳຫ້ວຍເສຍ; ຖ້າຄຣິສຕະຈັກເນົ່າ, ຄຳສອນກໍເສື່ອມ. ຄວາມ ໂລບ ແລະ ການຜິດສິນລະທຳກໍຈັບມືກັນ, . . . ເປັນຕາຢ້ານແທ້ໆ! ພວກບາດຫຼວງມີພຶດຕິກຳທີ່ ອັບອາຍຂາຍໜ້າ ເປັນເຫດໃຫ້ຄົນທີ່ໜ້າສົງສານຫຼາຍຄົນຕ້ອງຮັບໂທດນິຣັນ, ຈຶ່ງຕ້ອງມີການປະຕິຮູບ ທົ່ວໄປ.”[8] *{GC 149.3}*

ຖ້າຫາກວ່າລູເທີຢູ່ໃນທີ່ປະຊຸມ ກໍຈະບໍ່ສາມາດຕຳໜິຕິຕຽນການໃຊ້ອຳນາດເກີນຂອບເຂດຂອງລະບອບ ສັນຕະປາປາໄດ້ດີກວ່ານີ້. ຊ້ຳບໍ່ໜຳ, ການທີ່ຄົນເວົ້າເປັນສັດຕູຂອງລູເທີ ກໍຍິ່ງເຮັດໃຫ້ຖ້ອຍຄຳຂອງທ່ານ ດະຍຸກມີພະລັງ. *{GC 150.1}*

ຖ້າຫາກວ່າ ພຣະເຈົ້າຊົງເປີດຕາໃຫ້ຄົນໃນສະພາເຫັນໂລກວິນຍານໄດ້ ກໍຈະເຫັນວ່າມີທູດສະຫວັນຢູ່ ທ່າມກາງພວກເຂົາ ທີ່ຄອຍສ່ອງສະຫວ່າງເຂົ້າໄປຂັບໄລ່ຄວາມມືດ ເພື່ອເປີດຈິດໃຈຂອງຜູ້ຄົນໃຫ້ມີຄວາມ ພ້ອມທີ່ຈະຮັບເອົາຄວາມຈິງ; ດ້ວຍວ່າ, ຄວາມຈິງ ແລະ ສະຕິປັນຍາມາຈາກພຣະເຈົ້າ. ຣິດທານຸພາບ ຂອງພຣະອົງໄດ້ຄວບຄຸມແມ່ນກະທັ້ງສັດຕູຂອງການປະຕິຮູບ ແລະ ໄດ້ຈັດຕຽມເສັ້ນທາງສຳລັບວຽກງານ ອັນຍິ່ງໃຫຍ່ທີ່ກຳລັງຈະສຳເລັດ. ມາຕິນ ລູເທີບໍ່ໄດ້ຢູ່ໃນທີ່ປະຊຸມກໍຈິງ ແຕ່ທຸກຄົນໃນສະພາໄດ້ຍິນສຽງ ຂອງຜູ້ທີ່ຍິ່ງໃຫຍ່ກວ່າລູເທີ ນັ້ນຄືພຣະສຸຣະສຽງຂອງອົງພຣະຜູ້ເປັນເຈົ້າ. *{GC 150.2}*

ລູເທີຖືກເອີ້ນໃຫ້ລາຍງານຕົວຕໍ່ສະພາ

ປະຊຸມສະພາຈຶ່ງຕັ້ງຄະນະກຳມະການຂຶ້ນມາທັນທີ ເພື່ອລະບຸການກົດຂີ່ຂົ່ມເຫັງຂອງລະບອບ ສັນຕະປາປາຢ່າງຄົບຖ້ວນ ເພາະວ່າການຂົ່ມເຫັງນີ້ເປັນພາລະທີ່ຊາວເຢຍລະມັນຕ້ອງແບກຮັບຢ່າງ ໜັກໜ່ວງ. ມີການລະບຸເລື່ອງການໃຊ້ອຳນາດຜິດເປັນຂໍ້ໆໃຫ້ຄົບ 101 ຂໍ້ ແລະ ມີການນຳ ລາຍການດັ່ງກ່າວໄປສະເໜີຕໍ່ຈັກກະພັດ ພ້ອມດ້ວຍຄຳຂໍຮ້ອງໃຫ້ເພີ່ນຈັດການກັບຄວາມຜິດເຫຼົ່ານັ້ນ ທັນທີ. ພວກທີ່ຂຽນຄຳຮ້ອງນັ້ນກ່າວວ່າ: “ພວກຄຣິສຕຽນຕ້ອງພິນາດຫຼາຍສ່ຳໃດ? ເບິ່ງແມ! ຫົວໜ້າ ຝ່າຍຈິດວິນຍານຂອງຊາວຄຣິສຕຽນທັງປວງຢູ່ທ່າມກາງຄວາມເສື່ອມຊາມ, ການບີບບັງຄັບ ແລະ ເລື່ອງ ທີ່ອັບອາຍຂາຍໜ້າຫຼາຍສ່ຳໃດ? ພວກເຮົາມີໜ້າທີ່ຢັບຢັ້ງຄວາມພິນາດ ແລະ ຄວາມອັບອາຍຂາຍໜ້າ ຂອງປະຊາຊົນ. ເພາະເຫດນີ້, ພວກເຮົາຈຶ່ງນ້ອມຂໍໃຫ້ທ່ານອອກຄຳສັ່ງດ່ວນ ໃຫ້ມີການປະຕິຮູບ ທົ່ວໄປ ແລະ ຂໍໃຫ້ດຳເນີນການເພື່ອໃຫ້ການປະຕິຮູບດັ່ງກ່າວສຳເລັດເປັນຈິງ.”[9] *{GC 150.3}*

ບັດນີ້ສະພາສັ່ງໃຫ້ລູເທີມາລາຍງານຕໍ່ທີ່ປະຊຸມ. ເຖິງແມ່ນວ່າອະລີອັນເດີໄດ້ຄັດຄ້ານ, ຂໍຮ້ອງ ແລະ ຂົ່ມຂູ່ເພື່ອບໍ່ໃຫ້ລູເທີມາ, ແຕ່ໃນທີ່ສຸດຈັກກະພັດໄດ້ອະນຸມັດຕາມຄຳຮຽກຮ້ອງຂອງທີ່ປະຊຸມ ລູເທີຈຶ່ງຖືກ ເອີ້ນມາໃຫ້ລາຍງານຕໍ່ໜ້າປະຊຸມສະພາ. ມີການເຮັດໃບຮັບຮອງຄວາມປອດໄພພ້ອມກັບໝາຍຮຽກ ທີ່ ຢືນຢັນວ່າຈະສົ່ງເພີ່ນກັບໄປໃນທີ່ປອດໄພ. ມີການມອບໝາຍໃຫ້ຜູ້ສົ່ງສານຫຼວງນຳເອກະສານເຫຼົ່ານີ້ໄປທີ່ ວິດເທັນເບີກ ແລະ ນຳພາລູເທີກັບມາທີ່ເມືອງເວີມ. *{GC 150.4}*

---

[8] ໂດບິນເຍ, ເຫຼັ້ມ 7, ບົດ 4.

[9] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 4.

ໝູ່ເພື່ອນຂອງລູເທີຢ້ານຫຼາຍ ແລະ ບໍ່ຮູ້ວ່າຈະເຮັດຫຍັງດີ. ພວກເຂົາຊາບເຖິງອະຄະຕິ ແລະ ຄວາມກຽດຊັງທີ່ຝ່າຍສັນຕະປາປາມີຕໍ່ເພິ່ນ, ຈຶ່ງຢ້ານວ່າລູເທີຈະຖືກຈັບ ເຖິງແມ່ນວ່າມີໃບຮັບຮອງຄວາມປອດໄພກໍຕາມ, ພວກເຂົາຈຶ່ງຂໍຮ້ອງລູເທີບໍ່ໃຫ້ສ່ຽງຊີວິດ. ເພິ່ນຕອບວ່າ: “ພວກຝ່າຍສັນຕະປາປາບໍ່ຢາກໃຫ້ຂ້າພະເຈົ້າມາທີ່ເມືອງເວີມ ແຕ່ຕ້ອງການໃຫ້ຂ້າພະເຈົ້າຖືກຕັດສິນໂທດປະຫານຊີວິດ. ບໍ່ວ່າຈະຢ່າງໃດກໍບໍ່ສຳຄັນ. ຢ່າອະທິຖານເພື່ອຂ້າພະເຈົ້າເລີຍ ແຕ່ຈົ່ງອະທິຖານເພື່ອພຣະທຳຂອງພຣະເຈົ້າ. . . . ພຣະຄຣິສຈະປະທານພຣະວິນຍານຂອງພຣະອົງ ເພື່ອຂ້າພະເຈົ້າຈະສາມາດເອົາຊະນະອາຈານທີ່ສອນຄວາມເທັດເຫຼົ່ານັ້ນ. ຂ້າພະເຈົ້າໄດ້ດູຖູກພວກເຂົາໃນຊ່ວງທີ່ມີຊີວິດ ແລະ ຈະຊະນະພວກເຂົາດ້ວຍການຕາຍ. ຄົນທີ່ເມືອງເວີມວຸ້ນວາຍກັນດ້ວຍການພະຍາຍາມບັງຄັບໃຫ້ຂ້າພະເຈົ້າຖອນຄຳສອນ ແຕ່ທີ່ຂ້າພະເຈົ້າຈະຖອນຄືສິ່ງນີ້: ແຕ່ກ່ອນຂ້າພະເຈົ້າເຄີຍກ່າວວ່າສັນຕະປາປາເປັນຕົວແທນຂອງພຣະຄຣິສ, ມາບັດນີ້ຂ້າພະເຈົ້າຂໍຢືນຢັນວ່າ ສັນຕະປາປາເປັນສັດຕູຂອງພຣະເຈົ້າ ແລະ ເປັນທູດຂອງມານຊາຕານ.”[10] {GC 150.5}

ລູເທີບໍ່ຕ້ອງເດີນທາງຄົນດຽວ, ນອກຈາກຜູ້ສົ່ງສານຂອງຈັກກະພັດແລ້ວ ຍັງມີເພື່ອນສະໜິດສາມຄົນທີ່ຕັ້ງໃຈຮ່ວມເດີນທາງໄປນຳ. ເມລັງໂທນມີຄວາມປາຖະໜາຢ່າງແຮງກ້າທີ່ຈະໄປດ້ວຍ ເພາະລາວຜູກພັນກັບເພິ່ນຢ່າງໃກ້ຊິດ. ເມລັງໂທນຍິນດີຕິດຕາມລູເທີເຖິງຂັ້ນຕິດຄຸກ ຫຼື ຖືກຂ້າຖ້າຈຳເປັນ, ແຕ່ຄຳວິງວອນຂອງລາວຖືກປະຕິເສດ. ຖ້າລູເທີເສຍຊີວິດ ຄວາມຫວັງຂອງການປະຕິຮູບຈະຕ້ອງຝາກໄວ້ກັບຜູ້ຮ່ວມງານໜຸ່ມຜູ້ນີ້. ລູເທີກ່າວອຳລາເມລັງໂທນວ່າ: “ຖ້າຂ້າພະເຈົ້າບໍ່ໄດ້ກັບມາ ແລະ ຂ້າພະເຈົ້າຖືກພວກສັດຕູຂ້າຕາຍ, ເຈົ້າຈົ່ງສອນຕໍ່ໄປ ແລະ ຢືນໝັ້ນໃນຫຼັກຄວາມຈິງ. ຈົ່ງເຮັດວຽກແທນທີ່ຂ້າພະເຈົ້າ. . . . ຖ້າເຈົ້າລອດຕາຍແລ້ວ ການຕາຍຂອງຂ້າພະເຈົ້າຈະບໍ່ໄດ້ສ້າງຄວາມເສຍຫາຍຫຼາຍ.”[11] ພວກນັກສຶກສາ ແລະ ປະຊາຊົນທີ່ເຕົ້າໂຮມກັນເພື່ອສົ່ງລູເທີນັ້ນ ຕ່າງຮູ້ສຶກຊາບຊຶ້ງ. ມີຄົນຈຳນວນຫຼວງຫຼາຍທີ່ຕອບສະໜອງຕໍ່ຂ່າວປະເສີດ ຢືນຮ້ອງໄຫ້ຂໍໃຫ້ເພິ່ນເດີນທາງດ້ວຍຄວາມປອດໄພ. ຢ່າງນີ້ແຫຼະ, ນັກປະຕິຮູບພ້ອມດ້ວຍເພື່ອນຮ່ວມທາງຈຶ່ງອອກເດີນທາງຈາກເມືອງວິດເທັນເບີກ. {GC 151.1}

ໃນຂະນະທີ່ເດີນທາງ ພວກເຂົາເຫັນວ່າປະຊາຊົນເສົ້າໝອງ ເພາະສັງຫອນເຖິງເຫດຮ້າຍທີ່ອາດຈະເກີດຂຶ້ນ. ໃນເມືອງບາງແຫ່ງບໍ່ມີການຕ້ອນຮັບຢ່າງເປັນກຽດ. ຄັ້ງໜຶ່ງເມື່ອພວກເຂົາຢຸດພັກເຊົາໃນຕອນແລງ, ມີບາດຫຼວງຄົນໜຶ່ງທີ່ເປັນມິດ ສະແດງເຖິງຄວາມຢ້ານກົວ ດ້ວຍການເອົາຮູບຂອງນັກປະຕິຮູບຊາວອີຕາລີຄົນໜຶ່ງ ທີ່ຖືກຂ້າຍ້ອນຄວາມເຊື່ອມາໃຫ້ລູເທີເບິ່ງ. ອັນຕໍ່ມາພວກເຂົາໄດ້ຂ່າວວ່າ ທີ່ເມືອງເວີມມີຄຳສັ່ງຫ້າມງານຂຽນຂອງລູເທີ. ພວກສົ່ງສານນຳຄຳສັ່ງຂອງຈັກກະພັດອອກໄປປະກາດ ແລະ ຮຽກຮ້ອງໃຫ້ປະຊາຊົນນຳງານຂຽນດັ່ງກ່າວມາໃຫ້ພວກເຈົ້າເມືອງ. ຜູ້ສົ່ງສານຫຼວງທີ່ນຳທາງລູເທີຢ້ານວ່າເພິ່ນຈະບໍ່ໄດ້ຮັບຄວາມປອດໄພທີ່ສະພາ ແລະ ຄິດວ່າຄວາມຕັ້ງໃຈຂອງເພິ່ນຄົງຫວັ່ນໄຫວ ຈຶ່ງຖາມວ່າເພິ່ນຍັງຈະເດີນທາງຕໍ່ໄປ ຫຼື ບໍ່. ລູເທີຕອບວ່າ: “ເຖິງແມ່ນວ່າຂ້າພະເຈົ້າຖືກສັ່ງຫ້າມໃນທຸກເມືອງ, ຂ້າພະເຈົ້າກໍຍັງຈະເດີນທາງຕໍ່ໄປ.”[12] {GC 151.2}

ລູເທີໄດ້ຮັບການຕ້ອນຮັບຢ່າງເປັນກຽດທີ່ເມືອງເອີເຟີດ (Erfurt). ຂະນະທີ່ເດີນທາງຕາມຖະໜົນໃນເມືອງທີ່ເພິ່ນເຄີຍຂໍທານໃນຊ່ວງໄວໜຸ່ມ, ມີຄົນຈຳນວນຫຼວງຫຼາຍອອກມາຫ້ອມລ້ອມຊົມເຊີຍເພິ່ນ. ລູເທີແວ່ຢ້ຽມຫ້ອງພັກຂອງເພິ່ນສະໄໝເປັນນັກບວດ ແລະ ຄິດຄຳນຶງເຖິງການຕໍ່ສູ້ໃນໃຈກ່ອນວ່າເພິ່ນຈະຮັບແສງແຫ່ງຂ່າວປະເສີດ ເຊິ່ງບັດນີ້ແສງນັ້ນກຳລັງສ່ອງໄປທົ່ວທຸກແຫ່ງໃນເຢຍລະມັນ. ມີຄົນຂໍຮ້ອງໃຫ້ເພິ່ນເທດສະໜາ, ເຖິງແມ່ນວ່າທາງການໄດ້ຫ້າມບໍ່ໃຫ້ເພິ່ນເທດກໍຕາມ ແຕ່ຜູ້ສົ່ງສານຫຼວງທີ່ນຳທາງເພິ່ນກໍ

[10] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 6.
[11] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 7.
[12] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 7.

ອະນຸຍາດ. ສະນັ້ນ, ຄົນທີ່ເຄີຍເປັນນັກບວດຜູ້ຕ່ຳຕ້ອຍທີ່ສຸດໃນສຳນັກນັກບວດ ຈຶ່ງຂຶ້ນທຳມາດເພື່ອເທດສະໜາ. {GC 152.1}

ເພີ່ນຂຶ້ນຕົ້ນກ່າວແກ່ຄົນຈຳນວນຫຼາຍທີ່ເຕົ້າໂຮມກັນຢູ່ນັ້ນດ້ວຍຖ້ອຍຄຳຂອງພຣະເຢຊູຄຣິສວ່າ: “ສັນຕິສຸກຈົ່ງມີແກ່ທ່ານທັ້ງຫຼາຍ.” “ພວກນັກປັດຊະຍາ, ນັກສາສະໜາສາດ ແລະ ນັກຂຽນໄດ້ພະຍາຍາມສອນຄົນເຖິງຫົນທາງທີ່ນຳໄປສູ່ຊີວິດອັນຕະຫຼອດໄປເປັນນິດ ແຕ່ກໍບໍ່ສຳເລັດ. ບັດນີ້ຂ້າພະເຈົ້າຈະບອກທ່ານທັ້ງຫຼາຍໃຫ້ຊາບວ່າ . . . ພຣະເຈົ້າຊົງໃຫ້ຊາຍຄົນໜຶ່ງຟື້ນຈາກຄວາມຕາຍ ຄືພຣະເຢຊູຄຣິສເຈົ້າ, ເພື່ອພຣະອົງຈະທຳລາຍຄວາມຕາຍ, ກຳຈັດຄວາມບາບ ແລະ ປົດປະຕູນະຣົກ. ນີ້ຄືພັນທະກິດຊ່ວຍມະນຸດໃຫ້ລອດພົ້ນ; . . . ພຣະຄຣິສຊົງມີໄຊຊະນະແລ້ວ! ເປັນຂ່າວທີ່ໜ້າຊົມຊື່ນຍິນດີ! ພວກເຮົາລອດພົ້ນເພາະການປະພຶດປະຕິບັດຂອງພຣະອົງ ບໍ່ແມ່ນຍ້ອນການເຮັດບຸນທຳທານຂອງເຮົາເອງ. . . . ອົງພຣະເຢຊູຄຣິສເຈົ້າຂອງເຮົາທັ້ງຫຼາຍຊົງກ່າວວ່າ: ‘ສັນຕິສຸກຈົ່ງມີແກ່ທ່ານທັ້ງຫຼາຍ; . . . ຈົ່ງເບິ່ງມື ແລະ ຕີນຂອງເຮົາ.’[13] ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ, ມະນຸດເອີຍ, ເຮົາເອງ, ຄືເຮົາຜູ້ດຽວທີ່ໄດ້ເອົາຄວາມຜິດບາບຂອງເຈົ້າໄປ, ເຮົາໄດ້ໄຖ່ຊີວິດເຈົ້າ, ບັດນີ້ເຈົ້າຈຶ່ງມີສັນຕິສຸກ.” {GC 152.2}

ລູເທີຍັງຄົງເທດສະໜາຕໍ່ດ້ວຍການສະແດງໃຫ້ເຫັນວ່າ ຄວາມເຊື່ອທີ່ແທ້ຈິງຈະປາກົດໃຫ້ເຫັນໃນຊີວິດທີ່ບໍຣິສຸດ. “ພຣະເຈົ້າຊົງຊ່ວຍພວກເຮົາໃຫ້ລອດພົ້ນ, ສະນັ້ນ, ຂໍໃຫ້ພວກເຮົາດຳເນີນຊີວິດເປັນທີ່ພໍພຣະໄທຂອງພຣະອົງ. ເຈົ້າເປັນຄົນຮັ່ງມີບໍ? ຂໍໃຫ້ເຈົ້າໃຊ້ຊັບສິນເພື່ອຊ່ວຍເຫຼືອຄົນຍາກຈົນຕາມຄວາມຈຳເປັນຂອງພວກເຂົາ. ຫຼືວ່າເຈົ້າເປັນຄົນຍາກຈົນບໍ? ຈົ່ງເຮັດວຽກເປັນທີ່ພໍໃຈຂອງຄົນຮັ່ງມີ. ຖ້າຄວາມດີທີ່ເຈົ້າເຮັດນັ້ນມີປະໂຫຍດສຳລັບເຈົ້າຜູ້ດຽວ, ສິ່ງທີ່ເຈົ້າອ້າງວ່າເຮັດເພື່ອຖວາຍແດ່ພຣະເຈົ້ານັ້ນບໍ່ເປັນຄວາມຈິງ.”[14] {GC 152.3}

ປະຊາຊົນຟັງເໝືອນຕ້ອງມົນສະກົດ. ຄຳເທດສະໜາຂອງລູເທີເໝືອນການແບ່ງປັນອາຫານແຫ່ງຊີວິດໃຫ້ຈິດວິນຍານທີ່ຫິວກະຫາຍ. ລູເທີເຊີດຊູພຣະຄຣິສໄວ້ເໜືອບັນດາສັນຕະປາປາ ແລະ ຕົວແທນທຸກຄົນຂອງພວກເຂົາ, ເໜືອຈັກກະພັດທຸກອົງ ແລະ ກະສັດທັ້ງປວງ. ເພີ່ນບໍ່ໄດ້ກ່າວເຖິງຄວາມອັນຕະລາຍທີ່ເພີ່ນກຳລັງປະເຊີນຢູ່ໃນຂະນະນັ້ນ, ບໍ່ໄດ້ພະຍາຍາມໃຫ້ຕົວເອງເປັນສູນກາງ ຫຼື ໃຫ້ຄົນສົງສານເພີ່ນ. ການໄຕ່ຕອງເຖິງພຣະຄຣິສເຮັດໃຫ້ລູເທີລືມຕົວເອງ, ຊີວິດຂອງເພີ່ນເຊື່ອງຊ່ອນໄວ້ດ້ານຫຼັງພຣະອົງຜູ້ສິ້ນພຣະຊົນເທິງພູເຂົາຄານວາຣີ, ມີເປົ້າໝາຍດຽວຄືການປະກາດພຣະເຢຊູໃນຖານະພຣະຜູ້ໄຖ່ຂອງຄົນບາບ. {GC 152.4}

ກ້າເພາະເຊື່ອ

ທຸກບ່ອນທີ່ລູເທີເດີນທາງຜ່ານກໍມີຄົນອອກມາຕ້ອນຮັບຢ່າງຫຼວງຫຼາຍດ້ວຍຄວາມຢາກຮູ້ຢາກເຫັນ. ມີຝູງຊົນມະຫາສານຫ້ອມລ້ອມເພີ່ນ ແລະ ມີສຽງຮ້ອງເຕືອນດ້ວຍຄວາມຫວັງດີວ່າ ພວກຝ່າຍຄຣິສຕະຈັກໂຮມປະສົງຮ້າຍຕໍ່ເພີ່ນ. ບາງຄົນບອກວ່າ: “ພວກເຂົາຈະຂ້າເຈົ້າດ້ວຍການເຜົາໄຟ ຈົນຮ່າງກາຍຂອງເຈົ້າເຫຼືອແຕ່ເທົ່າຖ່ານ ເໝືອນທີ່ພວກເຂົາເຮັດຕໍ່ ຈອນ ຮັສ.” ລູເທີຕອບວ່າ, “ເຖິງແມ່ນວ່າພວກເຂົາຈະກໍ່ໄຟສູງພຽງຟ້າຕັ້ງແຕ່ເມືອງເວີມຕະຫຼອດຈົນຮອດເມືອງວິດເທັນເບີກ, ຂ້າພະເຈົ້າຈະຍ່າງຜ່ານຜ່າແປວໄຟນັ້ນໃນພຣະນາມຂອງພຣະອົງ ແລະ ຈະລາຍງານຕົວຕໍ່ໜ້າພວກເຂົາ. ຂ້າພະເຈົ້າປາຖະໜາເຂົ້າໄປໃນ

[13] ລູກາ 24:36, 39.
[14] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 7.

ປາກຂອງສັດຮ້າຍຕົວນີ້ເພື່ອຫັກແຂ້ວຂອງມັນ ພ້ອມທັງປະກາດຢືນຢັນຄວາມເຊື່ອໃນອົງພຣະເຢຊູຄຣິສເຈົ້າ."[15] *{GC 153.1}*

ຂ່າວທີ່ລູເທີເດີນທາງໃກ້ຈະຮອດເມືອງເວີມນັ້ນ ສ້າງຄວາມວຸ້ນວາຍບໍ່ໜ້ອຍ. ຝ່າຍພວກທີ່ເປັນມິດຢ້ານວ່າເພິ່ນຈະບໍ່ໄດ້ຮັບຄວາມປອດໄພ, ສ່ວນຝ່າຍສັດຕູກໍຢ້ານວ່າຈຸດປະສົງຂອງພວກເຂົາຈະບໍ່ສຳເລັດ. ພວກຝ່າຍສັນຕະປາປາພະຍາຍາມຈົນສຸດກຳລັງ ເພື່ອໃຫ້ລູເທີປ່ຽນໃຈບໍ່ເຂົ້າເມືອງ. ພວກເຂົາຂໍຮ້ອງໃຫ້ເພິ່ນໄປພັກໃນຜາສາດຫີນຂອງອັດສະວິນທີ່ເປັນມິດກັບຂະບວນການປະຕິຮູບ ໂດຍກ່າວວ່າ ຖ້າມີຂໍ້ຂັດແຍ້ງປະການໃດ ກໍຈະສາມາດປັບປ່ຽນແກ້ໄຂທີ່ນັ້ນໄດ້ໂດຍບໍ່ກະທົບຕໍ່ໃຜ. ສ່ວນຄົນທີ່ເຂົ້າຂ້າງເພິ່ນນັ້ນ ກໍເວົ້າເຖິງໄພອັນຕະລາຍທີ່ຈະຕ້ອງປະເຊີນ ໂດຍຫວັງວ່າເພິ່ນຈະຢ້ານ ແລະ ບໍ່ເຂົ້າເມືອງ. ແຕ່ຄວາມພະຍາຍາມທັງໝົດຂອງພວກເຂົາບໍ່ໄດ້ເປັນຜົນ. ລູເທີຍັງໝັ້ນຄົງບໍ່ຫວັ່ນໄຫວ ໂດຍກ່າວຈຸດຢືນວ່າ: "ເຖິງແມ່ນວ່າຜີສາດມານຮ້າຍໃນເມືອງເວີມ ມີຈຳນວນເທົ່າກັບດິນຂໍທີ່ມຸງຫຼັງຄາເຮືອນທຸກຫຼັງ, ຂ້າພະເຈົ້າກໍຍັງຈະເຂົ້າເມືອງນັ້ນຢູ່ດີ."[16] *{GC 153.2}*

ເມື່ອລູເທີໄປເຖິງເມືອງເວີມ ມີຝູງຊົນໃຫຍ່ມະຫາສານອອກມາຕ້ອນຮັບຢູ່ທີ່ປະຕູເມືອງ ເຊິ່ງມີຈຳນວນຫຼາຍກວ່າທີ່ອອກມາຕ້ອນຮັບອົງຈັກກະພັດເສຍອີກ. ຄົນເຫຼົ່ານີ້ມີຄວາມຕື່ນເຕັ້ນຫຼາຍທີ່ສຸດ, ແຕ່ໃນຂະນະດຽວກັນ ມີສຽງຂັບຮ້ອງບົດໄວ້ທຸກດັງຂຶ້ນຈາກທ່າມກາງຝູງຊົນ, ເປັນການເຕືອນລູເທີເຖິງຊະຕາກຳທີ່ລໍຖ້າເພິ່ນຢູ່ຂ້າງໜ້າ. ແຕ່ເພິ່ນກ່າວໃນຂະນະທີ່ລົງຈາກລໍດ້ມ້າວ່າ: "ພຣະເຈົ້າຈະຊົງປົກປ້ອງຄຸ້ມຄອງຂ້າພະເຈົ້າ." *{GC 153.3}*

ພວກຝ່າຍສັນຕະປາປາບໍ່ເຊື່ອວ່າລູເທີຈະມາທີ່ເມືອງເວີມແທ້ ແລະ ເມື່ອເພິ່ນໄປເຖິງເມືອງພວກເຂົາຈຶ່ງສັບສົນວຸ້ນວາຍ. ຈັກກະພັດສັ່ງໃຫ້ພວກທີ່ປຶກສາມາປະຊຸມກັນທັນທີ ເພື່ອພິຈາລະນາວ່າຈະດຳເນີນການຢ່າງໃດ. ມີເຈົ້າຄະນະຄົນໜຶ່ງທີ່ສະໜັບສະໜູນສັນຕະປາປາຢ່າງເຄັ່ງຄັດກ່າວວ່າ: "ພວກເຮົາໄດ້ພິຈາລະນາເລື່ອງນີ້ມາດົນແລ້ວ ຂໍໃຫ້ທ່ານຈັດການຄົນນີ້ທັນທີ. ຈັກກະພັດຊີກິມົງໄດ້ປະຫານຊີວິດ ຈອນ ຮັສ ດ້ວຍການເຜົາໄຟບໍ່ແມ່ນບໍ? ເຮົາບໍ່ຈຳເປັນໃຫ້ໃບຮັບຮອງຄວາມປອດໄພແກ່ຄົນນອກຮີດ ແລະ ຖ້າຄົນນອກຮີດມີໃບຮັບຮອງຄວາມປອດໄພຢູ່ແລ້ວ ພວກເຮົາບໍ່ຕ້ອງປະຕິບັດຕາມ." ຈັກກະພັດຕອບວ່າ: "ບໍ່, ພວກເຮົາຕ້ອງຮັກສາສັນຍາ."[17] ສະນັ້ນ, ພວກເຂົາຈຶ່ງຕົກລົງທີ່ຈະຟັງລູເທີໃຫ້ການຕໍ່ສະພາ. *{GC 153.4}*

ຄົນທັງເມືອງຢາກເຫັນຊາຍທີ່ມີຊື່ສຽງຄົນນີ້, ຈຶ່ງມີຄົນພາກັນຫຼັ່ງໄຫຼໄປຍາມເພິ່ນທີ່ເຮືອນພັກ. ລູເທີຫາກຳຫາຍປ່ວຍ ແລະ ມີອາການເມື່ອຍລ້າຈາກການເດີນທາງຕະຫຼອດສອງອາທິດ. ເພິ່ນຕ້ອງກຽມຕົວສຳລັບເຫດການສຳຄັນໃນມື້ອື່ນ, ເພິ່ນຈຶ່ງຕ້ອງການເວລາພັກຜ່ອນບ້າງ ໆ. ແຕ່ມີຄົນປາຖະໜາທີ່ຈະພົບເພິ່ນຫຼາຍ; ສະນັ້ນ, ຫຼັງຈາກທີ່ເພິ່ນໄດ້ພັກຜ່ອນສອງສາມຊົ່ວໂມງ ມີພວກຂຸນນາງ, ອັດສະວິນ, ບາດຫຼວງ ແລະ ປະຊາຊົນພາກັນມາເຕົ້າໂຮມຢູ່ອ້ອມຮອບໂຕເພິ່ນ. ທ່າມກາງຄົນເຫຼົ່ານີ້ມີຂຸນນາງຫຼາຍຄົນທີ່ຮຽກຮ້ອງຕໍ່ຈັກກະພັດດ້ວຍຄວາມກ້າຫານໃຫ້ແກ້ໄຂການໃຊ້ອຳນາດຜິດຂອງຄຣິສຕະຈັກ. ລູເທີກ່າວກ່ຽວກັບພວກເຂົາວ່າ: "ຄົນເຫຼົ່ານີ້ໄດ້ເປັນອິດສະຫຼະເພາະຂ່າວປະເສີດທີ່ຂ້າພະເຈົ້າປະກາດ."[18] ໃນຄົນທີ່ມາຢາມເບິ່ງນັກບວດທີ່ບໍ່ຢ້ານກົວຜູ້ນີ້ ມີທັງມິດ ແລະ ສັດຕູ, ແຕ່ບໍ່ວ່າເປັນໃຜເພິ່ນກໍຕ້ອນຮັບຢ່າງສຸຂຸມບໍ່ຫວັ່ນໄຫວ ແລະ ຕອບທຸກຄົນດ້ວຍສະຕິປັນຍາ ແລະ ການໃຫ້ກຽດ. ເພິ່ນມີ

[15] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 7.
[16] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 7.
[17] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 8.
[18] ມາຕິນ (Martyn), ໜ້າ 393.

ທ່າທີກ້າຫານ ແລະ ໜັກແໜ້ນໝັ້ນຄົງ. ໃບໜ້າຂອງເພິ່ນຊີດຂາວ ແລະ ມີຮ່ອງຮອຍຈາກຄວາມ ລຳບາກ ແລະ ການປ່ວຍໄຂ, ແຕ່ຍັງມີຮອຍຍິ້ມອັນເບີກບານສະແດງເຖິງຄວາມເປັນມິດ. ຖ້ອຍຄຳ ຂອງເພິ່ນມີພະລັງ ເພາະເພິ່ນກ່າວດ້ວຍຄວາມຈິງໃຈຢ່າງໜັກແໜ້ນ ແລະ ກະຕືລືລົ້ນ ຈົນພວກສັດຕູ ບໍ່ສາມາດຕ້ານທານໄດ້. ບໍ່ວ່ານິດ ຫຼື ສັດຕູຕ່າງກໍຮູ້ສຶກປະຫຼາດໃຈ. ບາງຄົນໝັ້ນໃຈວ່າພຣະເຈົ້າຊົງ ດົນໃຈເພິ່ນ, ສ່ວນຄົນອື່ນຍືມຖ້ອຍຄຳທີ່ພວກຟາຣີຊາຍກ່າວເຖິງພຣະຄຣິສວ່າ: “ຜີມານຮ້າຍສິງລາວ ຢູ່.” *{GC 154.1}*

ໃນວັນຖັດມາລູເທີຖືກເອີ້ນມາໃຫ້ເຂົ້າຮ່ວມປະຊຸມສະພາ. ມີເຈົ້າໜ້າທີ່ຫຼວງໄດ້ຮັບມອບໝາຍໃຫ້ນຳ ເພິ່ນເຂົ້າມາໃນຫ້ອງປະຊຸມ ແຕ່ການເດີນທາງໄປນັ້ນເປັນໄປດ້ວຍຄວາມຍາກລຳບາກ. ຕະຫຼອດເສັ້ນທາງ ມີຄົນຈຳນວນຫຼວງຫຼາຍລໍເຝົ້າເບິ່ງນັກບວດທີ່ກ້າຂັດຂືນຕໍ່ອຳນາດຂອງສັນຕະປາປາ. *{GC 154.2}*

ກ່ອນທີ່ຈະເຂົ້າໄປຕໍ່ໜ້າພວກຜູ້ພິພາກສາ ມີນາຍພົນແກ່ຄົນໜຶ່ງທີ່ເຄີຍຊະນະການສູ້ຮົບມາຫຼາຍ ຄັ້ງ ໜູນໃຈລູເທີວ່າ: “ໂອ ທ່ານນັກບວດຜູ້ໜ້າເຫັນໃຈເອີຍ! ຂ້າພະເຈົ້າ ແລະ ນາຍທະຫານຄົນອື່ນ ເຄີຍເຂົ້າສົງຄາມສູ້ຮົບເລືອດກະເດັນ, ແຕ່ສົງຄາມຂອງພວກເຮົາບໍ່ໄດ້ມີກຽດເທົ່າກັບສິ່ງທີ່ເຈົ້າຈະຢືນຢັດ ຕໍ່ສູ້ໃນມື້ນີ້. ຖ້າການຕໍ່ສູ້ຂອງເຈົ້າມີຄວາມຊອບທຳ, ຖ້າເຈົ້າໝັ້ນໃຈແລ້ວ, ຈົ່ງເດີນໄປຂ້າງໜ້າໃນພຣະນາມ ຂອງພຣະເຈົ້າ, ຢ່າຢ້ານສິ່ງໃດເລີຍ, ພຣະອົງຈະບໍ່ປະຖິ້ມເຈົ້າເລີຍ.”[19] *{GC 154.3}*

ລູເທີຢືນຕໍ່ໜ້າສະພາ

ໃນທີ່ສຸດລູເທີຢືນຢູ່ຕໍ່ໜ້າສະພາ. ມີບຸກຄົນສຳຄັນທີ່ສຸດໃນອານາຈັກອ້ອມຮອບອົງຈັກກະພັດຜູ້ນັ່ງ ຢູ່ເທິງບັນລັງ. ໃນມື້ນັ້ນ ມາຕິນ ລູເທີ ຈະຕ້ອງຊີ້ແຈງເຖິງສິ່ງທີ່ຕົນເຊື່ອຕໍ່ໜ້າທີ່ປະຊຸມທີ່ໂອ່ອ່າ ສະຫງ່າງາມທີ່ສຸດເທົ່າທີ່ເຄີຍມີມາກ່ອນໜ້ານັ້ນ. “ການທີ່ລູເທີມາຢືນຢູ່ຕໍ່ໜ້າກອງປະຊຸມແບບນີ້ ເປັນ ໄຊຊະນະອັນເດັ່ນຊັດເໜືອລະບອບສັນຕະປາປາ. ສັນຕະປາປາໄດ້ຕັດສິນລົງໂທດເພິ່ນແລ້ວ ແຕ່ບັດນີ້ ເພິ່ນຢືນຢູ່ຕໍ່ໜ້າຄະນະຜູ້ພິພາກສາ ເຊິ່ງເທົ່າກັບວ່າ ຄະນະຜູ້ພິພາກສາດັ່ງກ່າວໄດ້ຕັ້ງຕົວເອງຢູ່ ເໜືອສັນຕະປາປາ. ສັນຕະປາປາໄດ້ປະກາດຫ້າມເພິ່ນ ແລະ ຕັດເພິ່ນອອກຈາກສັງຄົມທັງໝົດຂອງ ມະນຸດ, ເຖິງຢ່າງນັ້ນເພິ່ນຖືກເອີ້ນໃຫ້ມາດ້ວຍພາສາທີ່ສຸພາບ ແລະ ສະພາທີ່ຊົງກຽດທີ່ສຸດໃນໂລກໄດ້ ຕ້ອນຮັບເພິ່ນ. ສັນຕະປາປາປະກາດການລົງໂທດເພື່ອປິດປາກເພິ່ນໄປຕະຫຼອດການ, ແຕ່ບັດນີ້ເພິ່ນຈະ ໄດ້ກ່າວຕໍ່ໜ້າຫຼາຍພັນຄົນຈາກດິນແດນຄຣິສຕຽນທີ່ຫ່າງໄກທີ່ສຸດທີ່ຕັ້ງໃຈມາຟັງຖ້ອຍຄຳຂອງເພິ່ນ. ລູເທີ ເປັນເຫດໃຫ້ເກີດການປະຕິວັດຄັ້ງໃຫຍ່. ຄຣິສຕະຈັກໂຣມກຳລັງລົ້ງຈາກບັນລັງ ແລະ ເປັນສຸງຂອງ ນັກບວດຄົນໜຶ່ງທີ່ເປັນເຫດໃຫ້ຄຣິສຕະຈັກນັ້ນຕ້ອງເສື່ອມອຳນາດເຊັ່ນນີ້.”[20] *{GC 155.1}*

ຄົນທີ່ເຂົ້າສະພານັ້ນລ້ວນແຕ່ເປັນຄົນທີ່ມີຍົດຖາບັນດາສັກ, ເປັນເຈົ້າເປັນນາຍ ແລະ ຄົນທີ່ມີອຳນາດ ບາລະມີ, ສ່ວນລູເທີກໍມາຈາກຄອບຄົວທີ່ຕ່ຳຕ້ອຍ, ເພິ່ນຈຶ່ງມີອາການຕະລຶງ ແລະ ເຂີນອາຍ. ມີ ເຈົ້າແຂວງສອງສາມຄົນສັງເກດອາການຂອງເພິ່ນ ຈຶ່ງເຂົ້າໄປຫາ, ມີຄົນໜຶ່ງກະຊິບວ່າ: “ຢ່າສູ່ຢ້ານຄົນ ທີ່ຂ້າໄດ້ແຕ່ກາຍ ແຕ່ບໍ່ສາມາດຂ້າຈິດວິນຍານໄດ້.” ອີກຄົນໜຶ່ງກ່າວວ່າ: “ເມື່ອພວກເຈົ້າຖືກນຳໄປຕໍ່ ໜ້າຜູ້ມີອຳນາດ ແລະ ຕໍ່ໜ້າກະສັດທັງຫຼາຍເພື່ອເຫັນແກ່ເຮົາ, ພຣະວິນຍານຈາກພຣະບິດາຂອງເຈົ້າ ຈະສອນເຈົ້າເຖິງຖ້ອຍຄຳທີ່ຄວນຈະເວົ້າ.” ໃນຍາມວິກິດນີ້ ຄົນສຳຄັນຂອງໂລກຈຶ່ງກ່າວຖ້ອຍຄຳຂອງ ພຣະຄຣິສ ເພື່ອໜູນກຳລັງໃຈຜູ້ຮັບໃຊ້ຂອງພຣະອົງຢ່າງນີ້ແຫຼະ. *{GC 155.2}*

---

[19] ໂດບິນເຍ, ເຫຼັ້ມ 7, ບົດ 8.

[20] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 8.

ມີຄົນນຳພາລູເທີເຂົ້າມາຕໍ່ໜ້າບັນລັງຂອງຈັກກະພັດ ແລ້ວສະພາກໍ່ງຸບລົງຈົນບໍ່ມີສຽງ. ຈາກນັ້ນມີເຈົ້າໜ້າທີ່ຄົນໜຶ່ງລຸກຂຶ້ນຊີ້ໄປທີ່ງານຂຽນຂອງລູເທີທີ່ຖືກຈັດວາງໄວ້ຢູ່ທີ່ນັ້ນ ແລະ ສັ່ງໃຫ້ເພິ່ນຕອບຄຳຖາມສອງຂໍ້ວ່າ: 1) ງານຂຽນເຫຼົ່ານັ້ນເປັນຂອງເພິ່ນຫຼືບໍ່; 2) ເພິ່ນຈະກ່າວປະຕິເສດຄວາມຄິດເຫັນຕ່າງໆ ທີ່ຢູ່ໃນງານຂຽນເຫຼົ່ານັ້ນຫຼືບໍ່. ຫຼັງຈາກນັ້ນມີຄົນອ່ານຫົວຂໍ້ໜັງສືຢ່າງຄ່ອງແຄ່ວ; ລູເທີຕອບຂໍ້ທີໜຶ່ງວ່າ, ໜັງສືເຫຼົ່ານັ້ນເປັນງານຂຽນຂອງເພິ່ນ. ແລ້ວເພິ່ນກໍກ່າວເພີ່ມເຕີມວ່າ: “ສ່ວນຄຳຖາມທີສອງນັ້ນ, ເນື່ອງຈາກມັນເປັນຄຳຖາມທີ່ກ່ຽວຂ້ອງກັບຄວາມເຊື່ອ ແລະ ຄວາມລອດພົ້ນ, ແຖມຍັງກ່ຽວຂ້ອງກັບພຣະຄຳຂອງພຣະເຈົ້າ ອັນເປັນສົມບັດລ້ຳຄ່າທີ່ສຸດໃນສະຫວັນ ແລະ ແຜ່ນດິນໂລກ; ສະນັ້ນ, ຖ້າຂ້າພະເຈົ້າຈະຕອບໂດຍບໍ່ໄດ້ພິຈາລະນາເລີຍຈະຖືວ່າເປັນຄວາມບໍ່ຮອບຄອບ. ເປັນໄປໄດ້ທີ່ຂ້າພະເຈົ້າຈະກ່າວເກີນຄວາມຈິງ ຫຼື ອາດຢືນຢັນໜ້ອຍເກີນໄປສຳລັບສະຖານະການເຊັ່ນນີ້, ເຊິ່ງຈະເປັນການເຮັດບາບຕໍ່ຖ້ອຍຄຳຂອງພຣະຄຣິສທີ່ວ່າ: ‘ຖ້າຜູ້ໃດປະຕິເສດເຮົາຕໍ່ໜ້າມະນຸດ ເຮົາກໍຈະປະຕິເສດຜູ້ນັ້ນຕໍ່ພຣະພັກພຣະບິດາເຈົ້າຂອງເຮົາໃນສະຫວັນເໝືອນກັນ.’ (ມັດທາຍ 10:33). ເພາະເຫດນີ້, ຂ້າພະເຈົ້ານ້ອມຂາບທູນຕໍ່ອົງຈັກກະພັດ ຂໍເວລາເພື່ອຂ້າພະເຈົ້າຈະໄດ້ຕອບໂດຍບໍ່ເຮັດຜິດຕໍ່ພຣະຄຳຂອງພຣະເຈົ້າ.”[21] *{GC 155.3}*

ລູເທີມີຄວາມຮອບຄອບທີ່ຂໍເຊັ່ນນີ້ຕໍ່ຈັກກະພັດ ເພາະຊ່ວຍໃຫ້ຄົນໃນສະພາເຫັນວ່າເພິ່ນບໍ່ໄດ້ເຮັດຕາມອາລົມຄວາມຮູ້ສຶກ. ບໍ່ມີໃຜຄາດຄິດວ່າ ຄົນທີ່ເຄີຍສະແດງຄວາມກ້າຫານ ແລະ ບໍ່ຍອມປ່ຽນຈາກຈຸດຢືນເໝືອນລູເທີ ຈະມີຄວາມສະຫງົບນິ້ງ ແລະ ຈະສາມາດຄວບຄຸມຕົນເອງຢ່າງນີ້ໄດ້, ເຊິ່ງເຮັດໃຫ້ຖ້ອຍຄຳຂອງເພິ່ນມີພະລັງ ແລະ ຕໍ່ມາກໍຊ່ວຍໃຫ້ເພິ່ນສາມາດຕອບດ້ວຍຄວາມຮອບຄອບ, ຄວາມເດັດດ່ຽວ, ສະຕິປັນຍາ ແລະ ຄວາມມີກຽດ ຈົນພວກສັດຕູຕົກໃຈ ແລະ ຕ້ອງຜິດຫວັງ; ທັງໝົດນີ້ໄດ້ຕຳໜິຄວາມຫຍິ່ງທະນົງໂຕຂອງພວກເຂົາ. *{GC 156.1}*

ວັນຕໍ່ມາລູເທີຈະຕ້ອງໃຫ້ຄຳຕອບສຸດທ້າຍຕໍ່ໜ້າສະພາ. ເພິ່ນຮູ້ສຶກໃຈຫາຍໄປຊ່ວງໜຶ່ງໃນຂະນະທີ່ເພິ່ນຄິດຄຳນຶງເຖິງບັນດາອຳນາດທີ່ຮວມຕົວກັນເພື່ອຕໍ່ສູ້ກັບຫຼັກຄວາມຈິງ. ຄວາມສະທ້ານຢ້ານກົວເຂົ້າມາຖ້ວມຫົວໃຈຈົນຄວາມເຊື່ອຂອງເພິ່ນຫວັ່ນໄຫວໄປພັກໜຶ່ງ. ຍິ່ງຄິດເຖິງຄວາມອັນຕະລາຍ, ຄວາມອັນຕະລາຍກໍຍິ່ງເພີ່ມທະວີຂຶ້ນໃນຈິນຕະນາການ, ເບິ່ງຄືວ່າພວກສັດຕູກຳລັງຈະຊະນະ ແລະ ບັນດາອຳນາດມືດຈະມີໄຊ. ເມກໝາຫ່ຳຫຸ້ມເພິ່ນຈົນເພິ່ນຮູ້ສຶກວ່າຕົນຖືກແຍກຫ່າງຈາກພຣະເຈົ້າ. ເພິ່ນປາຖະໜາທີ່ຈະໄດ້ຮັບການຢືນຢັນວ່າພຣະອົງຈະສະຖິດຢູ່ນຳເພິ່ນ. ລູເທີຂາບລົງເຖິງດິນດ້ວຍຄວາມທຸກໃຈ ແລະ ຮ້ອງທູນພຣະເຈົ້າດ້ວຍສຽງສະອື້ນ ແລະ ຈິດໃຈທີ່ພ້ອມຈະສະຫຼາຍ ເຊິ່ງມີແຕ່ພຣະເຈົ້າເທົ່ານັ້ນທີ່ຟັງເຂົ້າໃຈຄຳອະທິຖານເຊັ່ນນີ້ໄດ້ທັງໝົດ. *{GC 156.2}*

ລູເທີທູນພຣະເຈົ້າວ່າ: “ໂອ ພຣະເຈົ້າອົງນິຣັນຜູ້ຊົງຣິດທານຸພາບສູງສຸດ, ໂລກນີ້ເປັນຕາຢ້ານແທ້! ເບິ່ງດູ, ມັນອ້າປາກຈະກືນກິນຂ້ານ້ອຍແລ້ວ ແລະ ຂ້ານ້ອຍມີຄວາມເຊື່ອວາງໃຈໃນພຣະອົງແຕ່ໜ້ອຍດຽວ.... ຖ້າມີແຕ່ກຳລັງຝ່າຍໂລກທີ່ຈະໄວ້ວາງໃຈໄດ້ນັ້ນ, ຂ້ານ້ອຍຈະຕ້ອງຕາຍຢ່າງແນ່ນອນ.... ຊີວິດຂອງຂ້ານ້ອຍມາເຖິງຈຸດຈົບເສຍແລ້ວ, ພວກເຂົາປະກາດຕັດສິນໂທດໃຫ້ຂ້ານ້ອຍໄປແລ້ວ.... ໂອ ພຣະເຈົ້າເອີຍ, ຂໍຊົງຊ່ວຍຊີວິດຂອງຂ້ານ້ອຍແດ່ທ້ອນ ໃຫ້ຂ້ານ້ອຍສາມາດຕ້ານທານສະຕິປັນຍາຂອງໂລກໄດ້. ຂໍໃຫ້ພຣະອົງຊົງເຮັດສິ່ງນີ້... ຄືພຣະອົງຜູ້ດຽວ... ເພາະວຽກງານນີ້ບໍ່ແມ່ນຂອງຂ້ານ້ອຍ ແຕ່ເປັນຂອງພຣະອົງ. ຂ້ານ້ອຍບໍ່ມີວຽກທີ່ນີ້, ບໍ່ມີເລື່ອງທີ່ຈະຂັດແຍ້ງຕໍ່ຄົນເຫຼົ່ານີ້ທີ່ເປັນຜູ້ມີອຳນາດໃນໂລກ... ແຕ່ການຕໍ່ສູ້ເປັນຂອງພຣະອົງ... ເປັນພັນທະກິດທີ່ຊອບທຳ ແລະ ດຳເນີນໄປຕະຫຼອດນິດ

[21] ໂດບິນເຍ, ເຫຼັ້ມ 7, ບົດ 8.

ນິຣັນ. ໂອ ອົງພຣະຜູ້ເປັນເຈົ້າເຈົ້າຂາ ຂໍຊົງໂຜດຊ່ວຍຂ້ານ້ອຍແດ່! ພຣະເຈົ້າຜູ້ຊົງສັດຊື່ ແລະ ບໍ່ປ່ຽນແປງເຈົ້າຂາ, ຂ້ານ້ອຍຈະບໍ່ວາງໃຈໃນຜູ້ໃດນອກຈາກພຣະອົງ. . . . ທຸກສິ່ງທີ່ເປັນຂອງມະນຸດລ້ວນແຕ່ເປັນຂອງບໍ່ທ່ຽງແທ້ແນ່ນອນ, ທຸກສິ່ງທີ່ມາຈາກມະນຸດຕ້ອງລົ້ມເຫຼວ. . . . ພຣະອົງຊົງເລືອກຂ້ານ້ອຍສຳລັບວຽກງານນີ້, . . . ຂໍໃຫ້ພຣະອົງຊົງຢືນຄຽງຂ້າງຂ້ານ້ອຍ ເພື່ອປະໂຫຍດຂອງພຣະເຢຊູຄຣິສຜູ້ທີ່ພຣະອົງຊົງຮັກ, ພຣະອົງຊົງປົກປ້ອງຄຸ້ມຄອງຂ້ານ້ອຍ, ຊົງເປັນໂລ້ ແລະ ປ້ອມທີ່ເຂັ້ມແຂງຂອງຂ້ານ້ອຍ.”[22] *{GC 156.3}*

ພຣະເຈົ້າຊົງນຳດ້ວຍພຣະປັນຍາອັນບໍ່ມີຂອບເຂດຂອງພຣະອົງ ໃຫ້ລູເທີຊາບຊຶ້ງເຖິງຄວາມອັນຕະລາຍທີ່ເພີ່ນກຳລັງປະເຊີນ ເພື່ອເພີ່ນຈະບໍ່ໄວ້ວາງໃຈໃນກຳລັງຂອງຕົນເອງ ແລະ ຈະບໍ່ແລ່ນໄປສູ່ຄວາມອັນຕະລາຍນັ້ນຢ່າງປະໝາດ. ຢ່າງໃດກໍຕາມ, ຄວາມສະທ້ານຢ້ານກົວທີ່ຖ້ວມຫົວໃຈຂອງເພີ່ນໃນຂະນະນັ້ນ ບໍ່ໄດ້ເກີດຍ້ອນເພີ່ນຢ້ານຄວາມເຈັບປວດ, ບໍ່ແມ່ນເພີ່ນຢ້ານວ່າຈະຖືກທໍລະມານ ຫຼື ຂ້າຕາຍ ເຖິງແມ່ນວ່າສິ່ງເຫຼົ່ານີ້ເບິ່ງຄືວ່າຈວນຈະເກີດຂຶ້ນກໍຕາມ, ແຕ່ຄວາມຢ້ານນັ້ນເກີດຂຶ້ນເພາະເພີ່ນມາເຖິງຈຸດວິກິດ ແລະ ຮູ້ສຶກວ່າຕົວເອງບໍ່ມີສັກກະຍະພາບທີ່ຈະຮັບມືກັບມັນໄດ້. ຍ້ອນຄວາມອ່ອນແອຂອງຕົນ ຂະບວນການປະກາດສັດຈະທຳຄວາມຈິງອາດໄດ້ຮັບຄວາມເສຍຫາຍ. ເພີ່ນອະທິຖານຕໍ່ພຣະເຈົ້າດ້ວຍຄວາມຮ້ອນຮົນ ບໍ່ແມ່ນເພື່ອຂໍໃຫ້ຕົນໄດ້ຮັບຄວາມປອດໄພ ແຕ່ເພື່ອໃຫ້ຂ່າວປະເສີດໄດ້ຮັບໄຊຊະນະ. ເພີ່ນມີຄວາມທຸກໃຈຫຼາຍທີ່ສຸດ ເໝືອນຄວາມທຸກຂອງຢາໂຄບໃນຄືນທີ່ເພີ່ນປ້ຳສູ້ຢູ່ຂ້າງລຳຫ້ວຍໃນດິນແດນທີ່ເປົ່າປ່ຽວ;[23] ແລະບໍ່ຕ່າງຫຍັງກັບຢາໂຄບ, ເພີ່ນໄດ້ຕໍ່ສູ້ຈົນມີໄຊຊະນະໃນພຣະເຈົ້າ. ໃນຄວາມຮູ້ສຶກທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ເພີ່ນຈຶ່ງເຊື່ອວາງໃຈໃນພຣະຄຣິສອົງພຣະຜູ້ຊົງປົດປ່ອຍ. ເພີ່ນມີກຳລັງຂຶ້ນດ້ວຍຄວາມໝັ້ນໃຈວ່າ ຈະບໍ່ຕ້ອງລາຍງານຕໍ່ໜ້າປະຊຸມສະພາຕາມລຳພັງ. ມີສັນຕິສຸກກັບເຂົ້າມາໃນຈິດໃຈ ແລະ ເພີ່ນມີຄວາມຊົ່ນຊື່ນຍິນດີທີ່ໄດ້ຮັບອະນຸຍາດໃຫ້ເຊີດຊູພຣະຄຳຂອງພຣະເຈົ້າຕໍ່ໜ້າບັນດາຜູ້ນຳຊາດຕ່າງໆ. *{GC 157.1}*

ດ້ວຍຄວາມຢຶດໝັ້ນໃນພຣະເຈົ້າ ລູເທີກຽມຕົວສຳລັບການຕໍ່ສູ້ທີ່ລໍຖ້າຢູ່ຂ້າງໜ້າ. ເພີ່ນວາງແຜນຄຳຕອບ, ອ່ານທົບທວນງານຂຽນບາງສ່ວນຂອງຕົນເອງ ແລະ ຮຽບຮຽງຫຼັກຖານຈາກພຣະຄຳພີເພື່ອສະໜັບສະໜູນຈຸດຢືນຂອງຕົນ. ຈາກນັ້ນເພີ່ນວາງມືຊ້າຍເທິງພຣະຄຳພີທີ່ເປີດໄວ້ຕໍ່ໜ້າເພີ່ນ ແລ້ວຍົກມືຂວາຂຶ້ນໄປສູ່ຟ້າສະຫວັນ ແລະ ປະຕິຍານຕົນວ່າຈະ “ສັດຊື່ຕໍ່ຂ່າວປະເສີດ ແລະ ປະກາດເຖິງຄວາມເຊື່ອຂອງຕົນຢ່າງເປີດເຜີຍ ເຖິງແມ່ນຈະຕ້ອງເສຍເລືອດເພື່ອປະທັບຕາຄຳພະຍານຂອງຕົນກໍຕາມ.”[24] *{GC 157.2}*

ລູເທີປະກາດຈຸດຢືນເພື່ອເສລີພາບທາງຈິດສຳນຶກ

ເມື່ອລູເທີຖືກນຳມາຕໍ່ໜ້າປະຊຸມສະພາອີກ ໃບໜ້າຂອງເພີ່ນບໍ່ມີຮ່ອງຮອຍຄວາມຢ້ານກົວ ຫຼື ຄວາມອາຍ. ເພີ່ນຢືນທ່າມກາງຄົນສຳຄັນຂອງໂລກໃນຖານະພະຍານຝ່າຍພຣະເຈົ້າ ດ້ວຍສັນຕິສຸກ ແລະ ຄວາມສະຫງົບສຸຂຸມ, ໃນຂະນະດຽວກັນກໍຍັງມີຄວາມກ້າຫານ ແລະ ຄວາມສະຫງ່າງາມ. ບັດນີ້ ເຈົ້າໜ້າທີ່ຈາກຣາຊສຳນັກສັ່ງໃຫ້ເພີ່ນປະກາດໃຫ້ຄົນທັງຫຼາຍຟັງວ່າເພີ່ນໄດ້ຕັດສິນໃຈແບບໃດ ວ່າຈະຖອນຄຳສອນ ຫຼື ບໍ່ຖອນ. ລູເທີຕອບດ້ວຍນ້ຳສຽງທີ່ອ່ອນສຸພາບ ໂດຍບໍ່ມີຄວາມກ້າວລ້ຳແຕ່ຢ່າງໃດ. ເພີ່ນ

[22] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 8.
[23] ປະຖົມມະການ 32:22–32.
[24] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 8.

ມີທ່າທີທີ່ໃຫ້ຄວາມເຄົາລົບຢຳເກງ ໃນຂະນະດຽວກັນເພີ່ນກໍສະແດງເຖິງຄວາມໝັ້ນໃຈ ແລະ ຄວາມຊົມຊື່ນຍິນດີຈົນຄົນໃນສະພາຮູ້ສຶກປະຫຼາດໃຈ. {GC 158.1}

ລູເທີກ່າວວ່າ: “ຂໍຂາບຮຽນອົງຈັກກະພັດຜູ້ເປັນຮົ່ມເຢັນ, ບັນດາເຈົ້າແຂວງຜູ້ຊົ່ງກຽດ ແລະ ເຫຼົ່າຂຸນນາງທີ່ເຄົາລົບທຸກທ່ານ, ຂ້າພະເຈົ້າຢືນຢູ່ຕໍ່ໜ້າພວກທ່ານໃນມື້ນີ້ຕາມຄຳສັ່ງທີ່ປະກາດໃຫ້ຂ້າພະເຈົ້າມື້ວານນີ້ ແລະ ດ້ວຍພຣະເມດຕາຄຸນຂອງພຣະເຈົ້າ; ຂ້າພະເຈົ້າຂໍໃຫ້ຝ່າບາດ ແລະ ທ່ານຜູ້ຊົ່ງກຽດທັງຫຼາຍໂຜດຟັງຂ້າພະເຈົ້າກ່າວປ້ອງກັນອຸດົມການທີ່ຂ້າພະເຈົ້າໝັ້ນໃຈວ່າມີຄວາມຊອບທຳ ແລະ ເປັນຄວາມຈິງ. ຖ້າຫາກວ່າຂ້າພະເຈົ້າລະເມີດຕໍ່ທຳນຽມປະຕິບັດຂອງຣາຊສຳນັກໂດຍຮູ້ເທົ່າບໍ່ເຖິງການ, ຂໍຊ່ວຍຍົກໂທດໃຫ້ ເພາະຂ້າພະເຈົ້າບໍ່ໄດ້ເຕີບໂຕໃນຣາຊວັງຂອງກະສັດ ແຕ່ໃນສຳນັກນັກບວດທີ່ຢູ່ສອກຫຼີກຫ່າງຜູ້ຄົນ.”[25] {GC 158.2}

ຈາກນັ້ນເພີ່ນກໍເຂົ້າປະເດັນໂດຍກ່າວວ່າ ງານຂຽນທີ່ໄດ້ຮັບການຕີພິມຂອງເພີ່ນມີລັກສະນະທີ່ແຕກຕ່າງກັນ. ໃນບາງເຫຼັ້ມເພີ່ນຂຽນເຖິງຄວາມເຊື່ອ ແລະ ການປະພຶດດີ ຈົນແມ່ນແຕ່ຄົນທີ່ຕໍ່ຕ້ານເພີ່ນປະກາດວ່າ ເປັນໜັງສືທີ່ບໍ່ພຽງແຕ່ບໍ່ມີພິດມີໄພ ແຕ່ຍັງເປັນປະໂຫຍດອີກດ້ວຍ. ຖ້າຈະຖອນຄຳສອນໃນໜັງສືດັ່ງກ່າວ ກໍຈະເປັນການປະນາມຄວາມຈິງທີ່ທຸກຝ່າຍຍອມຮັບ. ໜັງສືອີກສ່ວນໜຶ່ງປະກອບດ້ວຍງານຂຽນທີ່ເປີດໂປງຄວາມຊົ່ວຂອງລະບອບສັນຕະປາປາ. ຖ້າຈະຖອນຄືນໜັງສືເຫຼົ່ານີ້ ກໍຈະເປັນການເສີມກຳລັງໃຫ້ອຳນາດຜະເດັດການຂອງຄຣິສຕະຈັກໂຣມ ແລະ ຈະເປັນການເປີດປະຕູໃຫ້ມີຄວາມຊົ່ວຫຼາຍຂຶ້ນ. ສ່ວນໜັງສືປະເພດທີສາມ ເພີ່ນຂຽນໂຈມຕີຄົນບາງຄົນທີ່ປົກປ້ອງຄວາມຊົ່ວ. ສຳລັບໜັງສືໃນໝວດນີ້ເພີ່ນຍອມຮັບດ້ວຍຄວາມຈິງໃຈວ່າ ເພີ່ນໄດ້ໃຊ້ຖ້ອຍຄຳທີ່ຮຸນແຮງເກີນໄປ. ເພີ່ນບໍ່ໄດ້ອ້າງວ່າຕົນບໍ່ມີຄວາມຜິດພາດ ແຕ່ໃນຂະນະດຽວກັນເພີ່ນກໍບໍ່ສາມາດຖອນຄືນໜັງສືປະເພດທີສາມນີ້ໄດ້ ເພາະຈະເຮັດໃຫ້ສັດຕູຂອງຄວາມຈິງມີຄວາມກ້າຫານຍິ່ງຂຶ້ນ ແລະ ພວກເຂົາຈະສວຍໂອກາດທຳລາຍຄົນຂອງພຣະເຈົ້າດ້ວຍຄວາມໂຫດຮ້າຍກວ່າເກົ່າ. {GC 158.3}

ລູເທີກ່າວຕໍ່ອີກວ່າ: “ຢ່າງໃດກໍຕາມ, ຂ້າພະເຈົ້າເປັນພຽງມະນຸດຄົນໜຶ່ງ ບໍ່ແມ່ນພຣະເຈົ້າ; ສະນັ້ນ, ຂ້າພະເຈົ້າຈະຂໍປົກປ້ອງຕົວເອງເໝືອນທີ່ພຣະຄຣິສຊົງປົກປ້ອງພຣະອົງເມື່ອພຣະອົງຊົງກ່າວວ່າ: ‘ຖ້າເຮົາໄດ້ເວົ້າຜິດ ໃຫ້ບອກທຸກຄົນໃນທີ່ນີ້ວ່າ ເຮົາເວົ້າຜິດອັນໃດ.’ (ໂຢຮັນ 18:23)... ຂ້າພະເຈົ້າຂາບຮຽນ ແລະ ຂໍຮ້ອງຝ່າບາດ, ບັນດາເຈົ້າແຂວງຜູ້ສູງສັກ ແລະ ຄົນທັງຫຼາຍໃນທຸກຊົ້ນຊັ້ນ ໂດຍໃຫ້ຄຳນຶງເຖິງພຣະເມດຕາຂອງພຣະເຈົ້າວ່າ ຂໍໃຫ້ທ່ານທັງຫຼາຍພິສູດຄວາມຜິດຂອງຂ້າພະເຈົ້າຈາກພຣະຄຳພີ ຕາມທີ່ບັນດາຜູ້ເຜີຍພຣະທຳ ແລະ ພວກອັກຄະສາວົກໄດ້ຂຽນໄວ້. ທັນທີທີ່ຂ້າພະເຈົ້າເຊື່ອວ່າຂ້າພະເຈົ້າມີຄວາມຜິດຕາມພຣະຄຳພີ ຂ້າພະເຈົ້າຈະຖອນຄວາມຜິດທຸກຢ່າງ ແລະ ຈະເປັນຄົນທຳອິດທີ່ຈັບໜັງສືຂອງຂ້າພະເຈົ້າແກວ່ງໃສ່ກອງໄຟ.” {GC 159.1}

“ຂ້າພະເຈົ້າຫວັງວ່າ ຖ້ອຍຄຳທີ່ກ່າວມານີ້ສະແດງໃຫ້ເຫັນຢ່າງແຈ່ມແຈ້ງວ່າ ຂ້າພະເຈົ້າໄດ້ພິຈາລະນາຢ່າງຮອບຄອບເຖິງຄວາມອັນຕະລາຍທີ່ຂ້າພະເຈົ້າກຳລັງປະເຊີນຢູ່ໃນຂະນະນີ້, ແຕ່ແທນທີ່ຈະຮູ້ສຶກທໍ້ໃຈ ຂ້າພະເຈົ້າມີຄວາມຊົມຊື່ນຍິນດີທີ່ບັດນີ້ໄດ້ເຫັນຂ່າວປະເສີດເປັນເຫດໃຫ້ເກີດຄວາມວຸ້ນວາຍ ແລະ ຄວາມຂັດແຍ້ງເໝືອນໃນສະໄໝກ່ອນ. ນີ້ຄືລັກສະນະຂອງພຣະຄຳຂອງພຣະເຈົ້າ ເພາະພຣະອົງຊົງກຳນົດພຣະຄຳໄວ້ສຳລັບສິ່ງເຫຼົ່ານີ້. ພຣະເຢຊູຄຣິສຊົງກ່າວວ່າ: ‘ຢ່າຄິດວ່າເຮົານຳຄວາມສະຫງົບສຸກມາສູ່ໂລກ, ເຮົາບໍ່ໄດ້ມາເພື່ອນຳຄວາມສະຫງົບສຸກມາໃຫ້ ແຕ່ໃຫ້ມີດາບ.’ (ມັດທາຍ 10:34). ພຣະປະສົງຂອງພຣະເຈົ້າປະເສີດ ແລະ ເປັນຕາຢ້ານ. ຈົ່ງລະວັງໃຫ້ດີ ຢ້ານວ່າຄວາມພະຍາຍາມດັບຄວາມຂັດແຍ້ງ

[25] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 8.

ນັ້ນ ຈະເປັນການກົດຂີ່ພຣະຄຳອັນບໍຣິສຸດຂອງພຣະເຈົ້າ ເຊິ່ງຈະເປັນເຫດໃຫ້ພວກທ່ານຕ້ອງປະສົບກັບອັນຕະລາຍທີ່ໜ້າຢ້ານ ແລະ ບໍ່ສາມາດຫຼຸດພົ້ນໄດ້, ຈົນພວກທ່ານຕ້ອງພິນາດໃນປັດຈຸບັນ ແລະ ຈິບຫາຍຕະຫຼອດນິຣັນ. . . . ຂ້າພະເຈົ້າສາມາດຍົກຕົວຢ່າງມາຫຼາຍເລື່ອງຈາກພຣະຄຳພີ, ສາມາດກ່າວເຖິງກະສັດຟາໂຣຫຼາຍອົງ, ບັນດາກະສັດຂອງບາບີໂລນ ແລະ ອິດສະຣາເອນ. ປະເດັນສຳຄັນທີ່ກະສັດເຫຼົ່ານີ້ກະທຳອັນເປັນເຫດໃຫ້ຕົນເອງຕ້ອງພິນາດ ຄືການຫາທາງເສີມສ້າງອຳນາດການປົກຄອງຂອງຕົນດ້ວຍແຜນການທີ່ເບິ່ງພາຍນອກແລ້ວສະຫຼາດທີ່ສຸດ. ‘ພຣະເຈົ້າຊົງເຄື່ອນຍ້າຍພູຜາ ແລະ ມັນກໍບໍ່ຮູ້:’” (ເບິ່ງ ໂຢບ 9:5 TKJV).[26] *{GC 159.2}*

ລູເທີກ່າວຖ້ອຍຄຳເຫຼົ່ານີ້ເປັນພາສາເຢຍລະມັນ ບັດນີ້ມີຄົນຂໍໃຫ້ເພີ່ມເວົ້າຄຳເດີມເປັນພາສາລາຕິນ. ເຖິງແມ່ນວ່າເພິ່ນຮູ້ສຶກເມື່ອຍລ້າກັບການເວົ້າໃນຮອບທຳອິດ ເພິ່ນກໍຍອມ ແລະ ກ່າວໃໝ່ດ້ວຍພະລັງ ແລະ ຄວາມກະຈ່າງແຈ້ງເໝືອນຄັ້ງແລກ. ພຣະເຈົ້າຊົງນຳໃນເລື່ອງນີ້. ເຈົ້າແຂວງຫຼາຍຄົນຫຼົງເຊື່ອຄວາມເທັດ ແລະ ມີຄວາມງົມງວາຍຈົນຫູໜວກຕາບອດ, ພວກເຂົາຈຶ່ງເຂົ້າບໍ່ເຖິງເຫດຜົນຂອງລູເທີໃນຮອບທຳອິດ ແຕ່ການກ່າວຊ້ຳໄດ້ຊ່ວຍໃຫ້ພວກເຂົາຈັບປະເດັນໄດ້ຢ່າງຊັດເຈນ. *{GC 159.3}*

ຄົນທັງຫຼາຍທີ່ຫຼັບຕາບໍ່ຍອມເບິ່ງແສງແຫ່ງຄວາມຈິງ ແລະ ຕັ້ງໃຈບໍ່ຍອມເຊື່ອຄວາມຈິງນັ້ນ ກັບໂມໂຫເປັນຟືນເປັນໄຟ ເມື່ອໄດ້ຍິນຖ້ອຍຄຳທີ່ລູເທີກ່າວຢ່າງໜັກແໜ້ນໝັ້ນຄົງ. ເມື່ອເພິ່ນເວົ້າຈົບແລ້ວ ໂຄສົກຂອງສະພາກ່າວຢ່າງໂກດຮ້າຍວ່າ: “ທ່ານບໍ່ໄດ້ຕອບຄຳຖາມ, . . . ທ່ານຕ້ອງຕອບກົງປະເດັນຢ່າງແຈ່ມແຈ້ງວ່າ . . . ທ່ານຈະຖອນ ຫຼື ບໍ່ຖອນ?” *{GC 160.1}*

ລູເທີຕອບວ່າ: “ເນື່ອງຈາກວ່າອົງຈັກກະພັດ ແລະ ທ່ານຜູ້ຊົງກຽດທັງຫຼາຍຕ້ອງການໃຫ້ຂ້າພະເຈົ້າຕອບສັ້ນໆ ກົງປະເດັນຢ່າງແຈ່ມແຈ້ງແລ້ວ ຂ້າພະເຈົ້າຂໍຕອບຢ່າງນີ້: ຂ້າພະເຈົ້າບໍ່ສາມາດມອບຄວາມເຊື່ອຂອງຂ້າພະເຈົ້າພາຍໃຕ້ບັນຊາຂອງສັນຕະປາປາ ຫຼື ພາຍໃຕ້ມະຕິຂອງສະພາຄຣິສຕະຈັກ ເພາະວ່າເປັນເລື່ອງທີ່ປາກົດແຈ້ງເໝືອນດັ່ງແສງຕາເວັນວ່າ ຄົນເຫຼົ່ານີ້ມີຄວາມຜິດພາດ ແລະ ຂັດແຍ້ງກັນເອງຢູ່ເລື້ອຍໆ. ສະນັ້ນ, ຖ້າບໍ່ໄດ້ພິສູດຈາກພຣະຄຳພີໃຫ້ຂ້າພະເຈົ້າແນ່ໃຈ ຫຼື ໃຊ້ເຫດຜົນຈົນຂ້າພະເຈົ້າເຂົ້າໃຈ, ຖ້າບໍ່ສາມາດອະທິບາຍຂໍ້ພຣະຄຳພີທີ່ຂ້າພະເຈົ້າກ່າວມານັ້ນ ເພື່ອພິສູດວ່າຂ້າພະເຈົ້າຜິດ, ຈິດສຳນຶກຜິດຊອບຂອງຂ້າພະເຈົ້າຕ້ອງຖືກຄວບຄຸມດ້ວຍພຣະຄຳຂອງພຣະເຈົ້າ. ຕາບໃດທີ່ພິສູດບໍ່ໄດ້, *ຂ້າພະເຈົ້າບໍ່ສາມາດຖອນຄຳສອນໄດ້ເຊັ່ນກັນ ແລະ ຈະບໍ່ຖອນ* ເພາະວ່າການທີ່ຄຣິສຕຽນຄົນໃດຈະກ່າວໃນສິ່ງທີ່ຂັດຕໍ່ຈິດສຳນຶກຜິດຊອບນັ້ນເປັນສິ່ງທີ່ບໍ່ປອດໄພ. ຂ້າພະເຈົ້າຂໍຢືນຢັດຢູ່ຈຸດນີ້ ແລະ ບໍ່ສາມາດເຮັດສິ່ງອື່ນໄດ້ເລີຍ. ຂໍພຣະເຈົ້າຊົງຊ່ວຍຂ້າພະເຈົ້າແດ່ທ້ອນ. ອາແມນ.”[27] *{GC 160.2}*

ຊາຍຊອບທຳຜູ້ນີ້ໄດ້ຢືນໝັ້ນຢູ່ເທິງພຣະຄຳຂອງພຣະເຈົ້າຢ່າງນີ້ແຫຼະ. ຄວາມຈິງຈາກສະຫວັນເຮັດໃຫ້ໃບໜ້າຂອງເພິ່ນເປີກບານ; ຂະນະທີ່ເພິ່ນກ່າວຕໍ່ຕ້ານອຳນາດຂອງຄວາມເທັດ ແລະ ເປັນພະຍານເຖິງຄວາມເຊື່ອທີ່ຊະນະໂລກນັ້ນ ອຸປະນິໄສອັນແສນດີງາມ ແລະ ບໍຣິສຸດຂອງເພິ່ນໄດ້ປາກົດຕໍ່ໜ້າທຸກຄົນ, ເຂົາທັງຫຼາຍໄດ້ເຫັນວ່າເພິ່ນໜ້າຊື່ນໃຈບານ ແລະ ມີຄວາມສະຫງົບສັນຕິ. *{GC 160.3}*

ສະພາພິຈາລະນາ

ທຸກຄົນໃນທີ່ປະຊຸມປະຫຼາດໃຈ ຕ່າງຄົນຕ່າງງຸງບບໍ່ປາກບໍ່ເວົ້າຢູ່ພັກໜຶ່ງ. ເມື່ອລູເທີຕອບຄັ້ງທຳອິດ ເພິ່ນກ່າວດ້ວຍສຽງຕ່ຳ ແລະ ສຽງທີ່ໃຫ້ຄວາມເຄົາລົບ, ມີທ່າທີທີ່ເບິ່ງຄືຈະຍອມຈຳນົນ. ພວກຝ່າຍຄຣິສຕະຈັກໂຣມເຫັນແລ້ວສະຫຼຸບວ່າ ຄວາມກ້າຫານຂອງເພິ່ນເລີ່ມຫວັ່ນໄຫວ. ພວກເຂົາຖືວ່າ

[26] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 8.
[27] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 8.

ການທີ່ລູເທີຂໍເວລານັ້ນ ເປັນພຽງຂັ້ນຕອນໜຶ່ງກ່ອນທີ່ເພິ່ນຈະປະກາດຖອນຄຳສອນຄືນ. ຈັກກະພັດ ຊານສ໌ເອງຮູ້ສຶກດູຖູກຮ່າງກາຍທີ່ໂຊມໂຊ, ເສື້ອຜ້າທຳມະດາ ແລະ ສຳນວນພາສາທີ່ລຽບງ່າຍຂອງ ລູເທີ ຈຶ່ງກ່າວວ່າ: “ບໍ່ມີທາງທີ່ນັກບວດຄົນນີ້ຈະເປັນເຫດໃຫ້ເຮົາກາຍເປັນຄົນນອກຮີດ.” ຄວາມ ກ້າຫານ ແລະ ຄວາມໝັກແໜ້ນທີ່ເພິ່ນມີໃນຂະນະນັ້ນ ພ້ອມດ້ວຍການໃຊ້ເຫດຜົນຢ່າງແຈ່ມແຈ້ງ ມີພະລັງເຮັດໃຫ້ທຸກຝ່າຍຕົກໃຈ. ຈັກກະພັດຮູ້ສຶກປະທັບໃຈຈຶ່ງກ່າວວ່າ: “ນັກບວດຄົນນີ້ເວົ້າຢ່າງ ອົງອາດກ້າຫານໂດຍບໍ່ຫວັ່ນໄຫວ.” ມີເຈົ້າແຂວງຫຼາຍຄົນຂອງເຢຍລະມັນທີ່ເບິ່ງລູເທີດ້ວຍຄວາມພາກພູມ ໃຈ ແລະ ຄວາມຊົ່ນຊື່ນຍິນດີທີ່ເພິ່ນເປັນຕົວແທນຂອງຊາດ. {GC 160.4}

ພັກພວກທີ່ສະໜັບສະໜູນຄຣິສຕະຈັກໂຣມເປັນຝ່າຍເສຍປຽບ, ລະບອບສັນຕະປາປາໄດ້ຫຼຸດຄ່າ ລົງໃນສາຍຕາຂອງຄົນສ່ວນໃຫຍ່. ພວກເຂົາພະຍາຍາມຮັກສາອຳນາດ ບໍ່ແມ່ນດ້ວຍການອ້າງຂໍ້ ພຣະຄຳພີ ແຕ່ດ້ວຍການຂົ່ມຂູ່ ອັນເປັນເຫດຜົນທີ່ຄຣິສຕະຈັກໂຣມໃຊ້ໄດ້ຜົນສະເໝີ. ໂຄສົກສະພາກ່າວ ວ່າ: “ຖ້າທ່ານບໍ່ຖອນ ຈັກກະພັດ ແລະ ຕົວແທນຈາກແຂວງຕ່າງ ໆ ຂອງອານາຈັກເຢຍລະມັນຈະ ປະຊຸມຫາລືວ່າຈະເຮັດແນວໃດກັບເຈົ້າຜູ້ເປັນຄົນນອກຮີດທີ່ບໍ່ຍອມກັບໃຈ.” {GC 161.1}

ເພື່ອນຄົນໜຶ່ງຂອງລູເທີຟັງເພິ່ນກ່າວປົກປ້ອງຕົນເອງຢ່າງຊື່ນບານ ແຕ່ກັບຢ້ານຈົນຕົວສັ່ນເມື່ອໄດ້ຍິນ ຖ້ອຍຄຳຂອງໂຄສົກສະພາ; ຝ່າຍລູເທີເອງກ່າວຢ່າງໃຈເຢັນວ່າ: “ຂໍໃຫ້ພຣະເຈົ້າຊົງຊ່ວຍຂ້າພະເຈົ້າ ເພາະ ຂ້າພະເຈົ້າບໍ່ສາມາດຖອນສິ່ງໃດໄດ້ເລີຍ.”[28] {GC 161.2}

ລູເທີຖືກສັ່ງໃຫ້ອອກຈາກຫ້ອງປະຊຸມໃນຂະນະທີ່ພວກເຈົ້າແຂວງປຶກສາຫາລືກັນ. ທຸກຄົນເຫັນວ່າ ເວລານັ້ນເປັນວິກິດການທີ່ໃຫຍ່ຫຼວງ. ພວກເຂົາຮູ້ສຶກວ່າການທີ່ລູເທີຢືນຢັດບໍ່ຍອມຈຳນົນ ອາດກະທົບຕໍ່ ປະຫວັດສາດຄຣິສຕະຈັກໄປອີກຫຼາຍຮ້ອຍປີ; ສະນັ້ນ, ພວກເຂົາຈຶ່ງຕັດສິນໃຈທີ່ຈະໃຫ້ໂອກາດເພິ່ນອີກ ຄັ້ງໜຶ່ງເພື່ອຖອນຄຳສອນ. ລູເທີຖືກນຳເຂົ້າມາໃນຫ້ອງປະຊຸມເປັນຄັ້ງສຸດທ້າຍ ແລະ ຖືກຖາມຄຳຖາມ ເດີມອີກຄັ້ງໜຶ່ງວ່າ ຈະຖອນຄຳສອນຂອງເພິ່ນ ຫຼື ບໍ່ຖອນ. ລູເທີຕອບວ່າ: “ຂ້າພະເຈົ້າບໍ່ມີຄຳຕອບອື່ນ ນອກຈາກທີ່ຕອບໄປແລ້ວ.” ທຸກຄົນເຫັນວ່າ ບໍ່ມີຫຍັງທີ່ຈະໂນ້ມນ້າວເພິ່ນໃຫ້ຍອມຈຳນົນຕໍ່ຄຳສັ່ງຂອງ ຄຣິສຕະຈັກໂຣມ ບໍ່ວ່າດ້ວຍຄຳສັນຍາ ຫຼື ການຂົ່ມຂູ່. {GC 161.3}

ພວກຜູ້ນຳຝ່າຍລະບອບສັນຕະປາປາຮູ້ສຶກບໍ່ພໍໃຈທີ່ນັກບວດຜູ້ຕ່ຳຕ້ອຍຄົນໜຶ່ງຈະດູຖູກອຳນາດຂອງ ພວກເຂົາ ໃນເມື່ອບັນດາກະສັດທັ້ງຫຼາຍ ແລະ ພວກຂຸນນາງລ້ວນແຕ່ສັ່ນສະທ້ານຕໍ່ອຳນາດນັ້ນ. ຄົນ ເຫຼົ່ານີ້ປາຖະໜາທີ່ຈະເຮັດໃຫ້ເພິ່ນຮູ້ຊຶ້ງເຖິງຄວາມໂກດຮ້າຍຂອງພວກເຂົາ ດ້ວຍການຈັບທໍລະມານ ເພິ່ນຈົນຕາຍ. ແຕ່ເຖິງແມ່ນວ່າລູເທີຈະເຂົ້າໃຈເຖິງອັນຕະລາຍທີ່ເພິ່ນປະເຊີນຢູ່ນັ້ນ ເພິ່ນກໍກ່າວດ້ວຍ ຄວາມສະຫງົບເຢັນ ແລະ ສັກສີທີ່ສົມກັບຄວາມເປັນຄຣິສຕຽນ. ຖ້ອຍຄຳຂອງເພິ່ນປາສະຈາກຄວາມ ຫຍິ່ງ, ບໍ່ມີຄວາມເຜັດຮ້ອນ ຫຼື ການບິດເບືອນຄວາມຈິງ. ໃນຂະນະທີ່ເພິ່ນກ່າວຢູ່ນັ້ນ ເພິ່ນລືມຮອດ ຕົວເອງ, ລືມຄົນໃຫຍ່ຄົນໂຕທີ່ຢູ່ອ້ອມຮອບ ແລະ ຮູ້ສຶກວ່າຕົນໄດ້ເຂົ້າເຝົ້າພຣະເຈົ້າຜູ້ຊົງຣິດທານຸພາບ ສູງສຸດເໜືອສັນຕະປາປາທຸກອົງ, ຜູ້ນຳຄຣິສຕະຈັກທຸກຄົນ, ກະສັດທັ້ງຫຼາຍ ແລະ ຈັກກະພັດ ທັ້ງປວງ. ພຣະຄຣິສຊົງກ່າວຜ່ານຄຳພະຍານຂອງລູເທີດ້ວຍພະລັງຣິດເດດ ຈົນທັ້ງມິດ ແລະ ສັດຕູ ຕ່າງຮູ້ສຶກປະຫຼາດໃຈເປັນຢ່າງຍິ່ງ. ພຣະວິນຍານຂອງພຣະເຈົ້າສະຖິດຢູ່ໃນຫ້ອງປະຊຸມໃນມື້ນັ້ນ ແລະ ຊົງ ດົນໃຈບຸກຄົນສຳຄັນໃນອານາຈັກ. ມີເຈົ້າແຂວງບາງຄົນຍອມຮັບຢ່າງອອກໜ້າອອກຕາວ່າ ອຸດົມການ ຂອງລູເທີມີຄວາມຊອບທຳ. ມີຫຼາຍຄົນເຫັນດ້ວຍກັບຫຼັກຄວາມຈິງ, ແຕ່ສຳລັບບາງຄົນ ຄວາມ ຮູ້ສຶກນັ້ນບໍ່ໄດ້ຢູ່ດົນ. ຍັງມີຄົນອີກປະເພດໜຶ່ງທີ່ບໍ່ໄດ້ສະແດງເຖິງຄວາມເຊື່ອໃນເວລານັ້ນ ແຕ່ຕໍ່ມາ

[28] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 8.

ຫຼັງຈາກທີ່ຄົ້ນຄວ້າພຣະຄຳພີດ້ວຍຕົນເອງ ໄດ້ກາຍເປັນຄົນທີ່ສະໜັບສະໜູນຂະບວນການປະຕິຮູບທີ່ບໍ່ຢ້ານກົວ. *{GC 161.4}*

ເຈົ້າແຂວງເຟຣເດີຣິກຮູ້ສຶກກັງວົນຫຼາຍທີ່ລູເທີຈະລາຍງານຕົວຕໍ່ສະພາ, ເພິ່ນຟັງຖ້ອຍຄຳຂອງລູເທີ ດ້ວຍຄວາມຊາບຊຶ້ງ ແລະ ຄວາມຍິນດີ. ເພິ່ນຮູ້ສຶກພາກພູມໃຈເມື່ອເຫັນນັກປະຕິຮູບຜູ້ນີ້ມີຄວາມ ກ້າຫານ, ຄວາມໜັກແໜ້ນ ແລະ ການຄວບຄຸມຕົນເອງ, ເພິ່ນຈຶ່ງຕັ້ງໃຈທີ່ຈະປົກປ້ອງລູເທີໃຫ້ ດີຂຶ້ນ. ເຈົ້າແຂວງສັງເກດຄວາມແຕກຕ່າງລະຫວ່າງທັງສອງຝ່າຍ ແລ້ວເຫັນວ່າ ສະຕິປັນຍາຂອງ ສັນຕະປາປາທຸກອົງ, ກະສັດທັງຫຼາຍ ແລະ ພວກຜູ້ນຳຄຣິສຕະຈັກໄດ້ພັງທະລາຍລົງຕໍ່ອຳນາດຂອງ ສັດຈະທຳຄວາມຈິງ. ການປະລາໄຊຂອງລະບອບສັນຕະປາປາໃນຄັ້ງນີ້ສຳຄັນຫຼາຍ ແລະ ສົ່ງຜົນດີຕໍ່ ທຸກຊົນຊາດໃນທຸກສະໄໝຕໍ່ມາ. *{GC 162.1}*

ເມື່ອຕົວແທນຂອງສັນຕະປາປາເຫັນວ່າຄຳຖະແຫຼງຂອງລູເທີເກີດຜົນຢ່າງໃດ ລາວກໍຮູ້ສຶກຢ້ານ ຢ່າງທີ່ບໍ່ເຄີຍຢ້ານມາກ່ອນວ່າ ຄຣິສຕະຈັກໂຣມຈະເສື່ອມອຳນາດລົງ; ລາວຈຶ່ງຕັດສິນໃຈທີ່ຈະໃຊ້ທຸກ ວິຖີທາງທີ່ລາວມີເພື່ອທຳລາຍລູເທີໃຫ້ໄດ້. ລາວມີຊື່ສຽງວ່າເປັນຄົນທີ່ມີວາທະສິນຄົມຄາຍ, ລາວຈຶ່ງ ກ່າວສຸດຝີປາກໂດຍໃຊ້ຄວາມສາມາດທາງການທູດ ເພື່ອໃຫ້ຈັກກະພັດຜູ້ເຍົາໄວເຫັນວ່າເປັນເລື່ອງທີ່ ໂງ່ ແລະ ອັນຕະລາຍຫຼາຍທີ່ຈະສູນເສຍຄວາມເປັນມິດກັບສັນຕະປາປາທີ່ເຮືອງອຳນາດ ເພື່ອເຫັນແກ່ ນັກບວດທີ່ບໍ່ສຳຄັນຄົນໜຶ່ງ. *{GC 162.2}*

ຖ້ອຍຄຳຂອງລາວໄດ້ຜົນ, ເພາະວ່າໃນວັນຕໍ່ມາຫຼັງຈາກວັນທີ່ລູເທີຖະແຫຼງຄຳຕອບ ຈັກກະພັດ ຊານສ໌ສັ່ງໃຫ້ອ່ານຣາຊໂອງການໃນທີ່ສະພາ ປະກາດວ່າເພິ່ນຕັ້ງໝັ້ນທີ່ຈະຮັກສາ ແລະ ປົກປ້ອງ ສາສະໜາກາໂຕລິກເໝືອນຈັກກະພັດອົງອື່ນສືບເລື້ອຍມາ. ຣາຊໂອງການກ່າວຕໍ່ໄປວ່າ ເນື່ອງຈາກ ລູເທີປະຕິເສດບໍ່ຍອມປະຖິ້ມຄວາມເຊື່ອທີ່ຜິດຂອງຕົນ ຈຶ່ງຕ້ອງມີການນຳໃຊ້ມາດຕະການທີ່ເຂັ້ມງວດ ເພື່ອປາບປາມລູເທີ ແລະ ຄຳສອນນອກຮີດຂອງເພິ່ນ. ຈັກກະພັດກ່າວວ່າ: “ມີນັກບວດຄົນດຽວທີ່ ຫຼົງໄປຕາມຄວາມຄິດໂງ່ຈ້າຂອງຕົນ ຈຶ່ງໄດ້ລຸກຂຶ້ນຕໍ່ສູ້ຄວາມເຊື່ອຂອງຊາວຄຣິສຕຽນທັງປວງ. ເພື່ອ ຢຸດຢັ້ງຂະບວນການທີ່ຜິດສິນລະທຳນີ້ ເຮົາຈະສະຫຼະອານາຈັກ, ຊັບສົມບັດ, ມິດສະຫາຍ, ຮ່າງກາຍ, ເລືອດເນື້ອ, ຈິດວິນຍານ ແລະ ຊີວິດຂອງເຮົາເອງ. ເຮົາກຳລັງຈະໃຫ້ລູເທີຜູ້ເປັນນັກບວດຄະນະ ອໍກັສຕິນ (Augustine) ອອກໄປໃຫ້ພົ້ນ ແລະ ຈະສັ່ງຫ້າມບໍ່ໃຫ້ລາວກໍ່ກວນປະຊາຊົນອີກເລີຍແມ່ນແຕ່ ໜ້ອຍ; ຈາກນັ້ນ, ເຮົາຈະດຳເນີນການຕໍ່ລາວກັບຄົນທີ່ເຊື່ອຕາມລາວ ໃນຖານະທີ່ເປັນຄົນນອກຮີດທີ່ ດື້ດ້ານ ໂດຍໃຫ້ມີການຕັດຊື່ຂອງພວກເຂົາອອກຈາກຄຣິສຕະຈັກ, ການສັ່ງຫ້າມບໍ່ໃຫ້ເຄື່ອນໄຫວດ້ານ ສາສະໜາ ແລະ ໃຊ້ທຸກວິທີທີ່ຈະທຳລາຍພວກເຂົາໄດ້. ເຮົາຂໍໃຫ້ສະມາຊິກສະພາຈາກທົ່ວທຸກແຂວງ ຂອງອານາຈັກ ຈົ່ງປະຕິບັດຢ່າງຄຣິສຕຽນທີ່ສັດຊື່.”[29] ຢ່າງໃດກໍຕາມ, ຈັກກະພັດກ່າວວ່າ ຈະຕ້ອງ ປະຕິບັດຕາມໃບຮັບຮອງຄວາມປອດໄພຂອງລູເທີ, ແລະກ່ອນທີ່ຈະດຳເນີນການໃດຕໍ່ສູ້ເພິ່ນ ກໍຕ້ອງ ອະນຸຍາດໃຫ້ເພິ່ນກັບເມືອບ້ານຢ່າງປອດໄພເສຍກ່ອນ. *{GC 162.3}*

ລູເທີຕົກຢູ່ໃນອັນຕະລາຍ

ສະມາຊິກສະພາມີຄວາມຄິດທີ່ຂັດແຍ້ງກັນຢູ່ສອງຂໍ້. ຄະນະທູດ ແລະ ຕົວແທນຂອງສັນຕະປາປາ ຮຽກຮ້ອງໃຫ້ຈັດການກັບລູເທີ ໂດຍບໍ່ຕ້ອງຄຳນຶງເຖິງໃບຮັບຮອງຄວາມປອດໄພ. ພວກເຂົາກ່າວວ່າ: “ໃຫ້ ແມ່ນ້ຳໄຣນ໌ຮັບຜົງກະດູກຂອງເພິ່ນເໝືອນທີ່ຮັບກະດູກຂອງ ຈອນ ຮັສ ໃນສະຕະວັດທີ່ແລ້ວ.”[30] ແຕ່

[29] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 9.
[30] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 9.

ບັນດາເຈົ້າແຂວງທັງຫຼາຍຂອງເຢຍລະມັນ ເຖິງແມ່ນຈະສະໜັບສະໜູນສັນຕະປາປາ ແລະ ເປັນສັດຕູຂອງລູເທີ ກັບຄັດຄ້ານທີ່ຈະມີການລະເມີດຄຳໝັ້ນສັນຍາທີ່ໃຫ້ໄວ້ຢ່າງເປັນທາງການເຊັ່ນນີ້ ເພາະຈະເປັນການສ້າງຮອຍມົນທິນໃຫ້ແກ່ປະເທດຊາດບ້ານເມືອງ. ພວກເຂົາຊີ້ໄປຍັງເຫດຮ້າຍທີ່ເກີດຂຶ້ນຫຼັງຈາກການເສຍຊີວິດຂອງຮັສ ແລະ ປະກາດວ່າ ພວກເຂົາບໍ່ກ້າໃຫ້ເຫດຮ້າຍເຫຼົ່ານັ້ນເກີດຂຶ້ນຊ້ຳອີກ ແລະ ສ້າງຄວາມເສຍຫາຍໃຫ້ແກ່ອານາຈັກເຢຍລະມັນ ແລະ ແກ່ຈັກກະພັດຜູ້ເຍົາໄວ. {GC 163.1}

ຈັກກະພັດຊານສ໌ຕອບຂໍ້ສະເໜີອັນຕ່ຳຊ້ານີ້ດ້ວຍຕົນເອງວ່າ: “ເຖິງແມ່ນວ່າສັກສີ ແລະ ຄວາມສັດຊື່ຈະໝົດໄປຈາກໂລກ ແຕ່ກໍຍັງຄວນເຫຼືອໄວ້ໃນຈິດໃຈຂອງກະສັດ.”[31] ພວກຝ່າຍສັນຕະປາປາເຊິ່ງເປັນສັດຕູທີ່ໂຫດຮ້າຍທີ່ສຸດຂອງລູເທີ ທູນອ້ອນວອນຈັກກະພັດຊານສ໌ໃຫ້ຈັດການກັບລູເທີ ເໝືອນຈັກກະພັດ ຊີກິມົງ ຈັດການກັບຮັສ ຄືປ່ອຍໃຫ້ຄຣິສຕະຈັກຈັດການນັ້ນເອງ; ແຕ່ພໍລະນຶກເຖິງເຫດການໃນສະໄໝນັ້ນ ເມື່ອຮັສຢູ່ຕໍ່ໜ້າສະພາ ແລະ ຊີ້ໄປທີ່ສາຍໂສ້ທີ່ມັດຕົວຢູ່ພ້ອມທັງເຕືອນສະຕິຈັກກະພັດ ຊີກິມົງໃນເລື່ອງທີ່ບໍ່ໄດ້ຮັກສາສັນຍາ, ຈັກກະພັດຊານສ໌ທີ 5 ກ່າວວ່າ: “ເຮົາບໍ່ຢາກໜ້າແດງເໝືອນຊີກິມົງ.”[32] {GC 163.2}

ເຖິງຢ່າງໃດກໍຕາມ, ຈັກກະພັດຊານສ໌ຕັ້ງໃຈປະຕິເສດຫຼັກຄວາມຈິງທີ່ລູເທີສອນ, ເພີ່ນຂຽນວ່າ: “ເຮົາໝາຍໝັ້ນປັ້ນມືທີ່ຈະເຮັດຕາມແບບຢ່າງຂອງບັນພະບຸລຸດ.”[33] ເພີ່ນຕັດສິນໃຈວ່າຈະບໍ່ຄາດເຄື່ອນໄປຈາກຮີດຄອງປະເພນີ ແມ່ນແຕ່ເພື່ອຢ່າງໄປຕາມທາງແຫ່ງຄວາມຈິງ ແລະ ຄວາມຊອບທຳ. ໃນເມື່ອບັນພະບຸລຸດສະໜັບສະໜູນລະບອບສັນຕະປາປາ ເພີ່ນກໍຈະສະໜັບສະໜູນເຊັ່ນກັນ ເຖິງແມ່ນວ່າລະບອບນັ້ນເຕັມໄປດ້ວຍຄວາມໂຫດຮ້າຍ ແລະ ຄວາມເສື່ອມເສຍກໍຕາມ. ດ້ວຍເຫດນີ້, ເພີ່ນຈຶ່ງເລືອກທາງປະຕິບັດ ໂດຍປະຕິເສດທີ່ຈະຮັບແສງແຫ່ງຄວາມຈິງຫຼາຍກວ່າທີ່ບັນພະບຸລຸດເຄີຍໄດ້ຮັບ ແລະ ບໍ່ຍອມເຮັດໜ້າທີ່ອື່ນໃດນອກເໜືອຈາກທີ່ບັນພະບຸລຸດເຄີຍໄດ້ກະທຳມາ. {GC 163.3}

ມະນຸດຕ້ອງຮັບຜິດຊອບຕໍ່ແສງສະຫວ່າງທີ່ໄດ້ຮັບ

ມີຫຼາຍຄົນໃນປັດຈຸບັນ ທີ່ຍຶດຖືທຳນຽມປະເພນີຂອງບັນພະບຸລຸດແບບນີ້. ເມື່ອພຣະເຈົ້າຊົງເປີດເຜີຍຫຼັກຄວາມຈິງເພີ່ມເຕີມໃຫ້ຄົນເຫຼົ່ານີ້ ພວກເຂົາບໍ່ຍອມຮັບ ເພາະເປັນສິ່ງໃໝ່ທີ່ບັນພະບຸລຸດບໍ່ເຄີຍຮູ້ຈັກ ແລະ ບໍ່ໄດ້ຮັບເອົາ. ແຕ່ວ່າເຮົາບໍ່ໄດ້ຢູ່ໃນໂລກຂອງບັນພະບຸລຸດ; ສະນັ້ນ, ໜ້າທີ່ຮັບຜິດຊອບຂອງພວກເຮົາບໍ່ຄືກັບໜ້າທີ່ຮັບຜິດຊອບຂອງພວກເຂົາ. ພຣະເຈົ້າບໍ່ພໍພຣະໄທ ຖ້າພວກເຮົາຈະຍຶດແບບຢ່າງຂອງບັນພະບຸລຸດໃນການກຳນົດໜ້າທີ່ຂອງຕົນ ແທນທີ່ຈະຄົ້ນຄວ້າພຣະທຳແຫ່ງຄວາມຈິງດ້ວຍຕົນເອງ ເພື່ອຈະຮູ້ຈັກໜ້າທີ່ດັ່ງກ່າວ. ພວກເຮົາຕ້ອງຮັບຜິດຊອບຫຼາຍກວ່າບັນພະບຸລຸດ ເພາະເຮົາຕ້ອງຮັບຜິດຊອບຕໍ່ແສງແຫ່ງຄວາມຈິງທີ່ພວກເຂົາໄດ້ຮັບ ແລະ ຖ່າຍທອດມາຍັງພວກເຮົາ; ນອກຈາກນັ້ນ, ກໍຍັງຕ້ອງຮັບຜິດຊອບແສງທີ່ສ່ອງມາເພີ່ມເຕີມຈາກພຣະຄຳຂອງພຣະເຈົ້າໃນທຸກມື້ນີ້. {GC 164.1}

ພຣະຄຣິສຊົງກ່າວກ່ຽວກັບຊາວຢິວທີ່ບໍ່ເຊື່ອວ່າ: “ຖ້າເຮົາບໍ່ໄດ້ມາບອກພວກເຂົາ ພວກເຂົາກໍຄົງບໍ່ມີຄວາມຜິດບາບ, ແຕ່ບັດນີ້ ພວກເຂົາບໍ່ມີຂໍ້ແກ້ຕົວໃນເລື່ອງບາບກຳຂອງພວກເຂົາ.” (ໂຢຮັນ 15:22). ຣິດທານຸພາບອັນດຽວກັນນີ້ ໄດ້ກ່າວແກ່ຈັກກະພັດ ແລະ ບັນດາເຈົ້າແຂວງຂອງເຢຍລະມັນຜ່ານ ມາຕິນ ລູເທີ. ໃນຂະນະທີ່ແສງແຫ່ງຄວາມຈິງສ່ອງອອກຈາກພຣະຄຳຂອງພຣະເຈົ້ານັ້ນ, ພຣະ-ວິນຍານຂອງພຣະອົງຊົງເຊື້ອເຊີນຫຼາຍຄົນໃນທີ່ປະຊຸມເປັນຄັ້ງສຸດທ້າຍໃຫ້ຍອມຮັບຄວາມຈິງ. ຫຼາຍ

[31] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 9.
[32] ລອງຟອງ (Lenfant), ເຫຼັ້ມ 1, ໜ້າ 422.
[33] ໂດບິນເຍ, ເຫຼັ້ມ 7, ບົດ 9.

ຮ້ອຍປີກ່ອນໜ້ານັ້ນ ປີລາດໄດ້ປິດໜ້າໃຈຂອງຕົນເອງຕໍ່ພຣະຜູ້ໄຖ່ຂອງໂລກ ຍ້ອນລາວມີຄວາມໜຍິ່ງໃນ ສັກສີ ແລະ ຢາກເປັນທີ່ນິຍົມຂອງມວນຊົນ. ຜູ້ປົກຄອງເຟລິກສຸງສົ່ນໃນຂະນະທີ່ຂໍຮ້ອງໃຫ້ອາຈານ ໂປໂລນັກປະກາດຄວາມຈິງວ່າ: “ບັດນີ້ ເຈົ້າອອກໄປໄດ້ແລ້ວ ເຮົາຈະເອີ້ນເຈົ້າມາອີກ ເມື່ອເຮົາ ມີໂອກາດ.” ສ່ວນກະສັດອັກຣິປາຍອມຮັບວ່າ: “ເຮົາເກືອບຈະເປັນຄຣິສຕຽນໂດຍຄຳຊັກຊວນຂອງ ເຈົ້າ” (ກິດຈະການ 24:25; 26:28 TKJV) ແຕ່ກັບຫັນຫຼັງໃສ່ຂ່າວປະເສີດທີ່ສະໜອງໂຜດສົ່ງໃຫ້ ນັ້ນ. ໃນທຳນອງດຽວກັນ, ຍ້ອນຄວາມໜຍິ່ງໃນສັກສີ ແລະ ການເຫັນແກ່ຜົນປະໂຫຍດທາງການ ເມືອງ ຈັກກະພັດຊານສ໌ທີ 5 ຈຶ່ງຕັດສິນໃຈປະຕິເສດແສງແຫ່ງຄວາມຈິງ. {GC 164.2}

ຂ່າວລືເລື່ອງແຜນທຳລາຍລູເທີແຜ່ສະພັດ ເຮັດໃຫ້ຄົນທັງເມືອງສະດຸ້ງຕົກໃຈ. ເພິ່ນໄດ້ຜູກມິດກັບ ຫຼາຍຄົນທີ່ຮູ້ຈັກເຖິງຄວາມໂຫດຮ້າຍຂອງຄຣິສຕະຈັກໂຣມ ແລະ ຮູ້ວ່າພວກທີ່ນິຍົມສັນຕະປາປາມີຄວາມ ໂຫດຫ້ຽມ ແລະ ບໍ່ຮັກສາສັນຍາຕໍ່ທຸກຄົນທີ່ກ້າເປີດເຜີຍຄວາມເສື່ອມເສຍຂອງຄຣິສຕະຈັກ; ເພື່ອນຂອງ ລູເທີເຫຼົ່ານີ້ຕັດສິນໃຈວ່າ ເພິ່ນຈະຕ້ອງບໍ່ຕົກເປັນເຫຍື່ອ. ມີຊຸນນາງຫຼາຍຮ້ອຍຄົນສັນຍາວ່າຈະປົກປ້ອງ ເພິ່ນ; ໃນທ່າມກາງຊຸນນາງເຫຼົ່ານີ້ ມີຫຼາຍຄົນປະນາມຄຳປະກາດຂອງຈັກກະພັດວ່າ ເປັນການສະແດງ ເຖິງຄວາມອ່ອນແອທີ່ຍອມຈຳນົນຕໍ່ອຳນາດຂອງຄຣິສຕະຈັກໂຣມ. ມີການຕິດປ້າຍຕາມປະຕູຮົ້ວຂອງ ເຮືອນປະຊາຊົນ ແລະ ໃນທີ່ສາທາລະນະ, ປ້າຍບາງອັນກ່າວຮ້າຍລູເທີ ແລະ ບາງອັນສະໜັບສະໜູນ ເພິ່ນ. ມີປ້າຍແຜ່ນໜຶ່ງທີ່ຂຽນແຕ່ຂໍ້ຄວາມຄົມຄາຍຂອງກະສັດໂຊໂລໂມນທີ່ວ່າ: “ໂອ ບ້ານເມືອງເອີຍ ວິບັດ ແກ່ເຈົ້າເມື່ອກະສັດຂອງເຈົ້າເປັນເດັກ.” (ປັນຍາຈານ 10:16 TKJV). ກະແສຄວາມນິຍົມຊົມຊອບລູເທີ ນັ້ນໄຫຼແຮງຢູ່ທົ່ວອານາຈັກເຢຍລະມັນ ສົ່ງຜົນໃຫ້ຈັກກະພັດ ແລະ ສະພາເຫັນກົງກັນວ່າ ຖ້າຈະ ປະຕິບັດຕໍ່ລູເທີໃນທາງທີ່ບໍ່ເປັນທຳ ຈະເປັນເຫດໃຫ້ເກີດຄວາມອຸ້ນວາຍທົ່ວອານາຈັກ ແລະ ອາດຈະ ກະທົບຕໍ່ຄວາມໝັ້ນຄົງຂອງບັນລັງຈັກກະພັດອີກດ້ວຍ. {GC 164.3}

ຂໍ້ສະເໜີໃຫ້ປອງດອງກັບໂຣມ

ເຟຣເດີຣິກແຫ່ງແຊັກຊັນນີຍັງສັງເກດການແຕ່ບໍ່ໄດ້ສະແດງອອກ, ເຈົ້າແຂວງຜູ້ນີ້ບໍ່ເປີດເຜີຍຄວາມ ຮູ້ສຶກແທ້ທີ່ຕົນມີຕໍ່ລູເທີຜູ້ນຳການປະຕິຮູບ, ແຕ່ໃນຂະນະດຽວກັນກໍປົກປ້ອງຄຸ້ມຄອງເພິ່ນຢ່າງບໍ່ຮູ້ ເມື່ອຍ ແລະ ເຝົ້າສັງເກດການເຄື່ອນໄຫວຂອງເພິ່ນ ແລະ ຄົນທີ່ຕໍ່ຕ້ານເພິ່ນ. ຢ່າງໃດກໍຕາມ, ມີຫຼາຍ ຄົນສະແດງອອກຢ່າງເປີດເຜີຍວ່າເຫັນດ້ວຍກັບລູເທີ ແລະ ພາກັນມາຢາມເພິ່ນ ທັງເຈົ້າແຂວງ, ຊຸນນາງ ນ້ອຍໃຫຍ່ ແລະ ຄົນສຳຄັນອື່ນ ບໍ່ວ່າຈະມີຕຳແໜ່ງໃນຄຣິສຕະຈັກ ຫຼື ເປັນສະມາຊິກທຳມະດາ ກໍຕາມ. ທ້າວ ສະປາລາຕິນ (Spalatin) ຂຽນວ່າ: “ຫ້ອງພັກຂອງທ່ານສາດສະດາຈານ[34] ບໍ່ສາມາດ ຮອງຮັບຈຳນວນແຂກຄົນທີ່ມາຢາມ.”[35] ປະຊາຊົນເບິ່ງເພິ່ນເໝືອນວ່າເປັນຄົນເໜືອມະນຸດ. ແມ່ນແຕ່ຄົນ ທີ່ບໍ່ເຊື່ອໃນຄຳສອນຂອງລູເທີກໍຍັງຮູ້ສຶກວ່າຕ້ອງຊົມເຊີຍຄວາມສັດຊື່ທີ່ເຮັດໃຫ້ເພິ່ນກ້າສ່ຽງຕາຍ ແທນທີ່ ຈະລະເມີດຈິດສຳນຶກຜິດຊອບຂອງຕົນ. {GC 165.1}

ມີຄວາມພະຍາຍາມສູງທີ່ຈະໃຫ້ລູເທີຍອມປະນີປະນອມກັບຄຣິສຕະຈັກໂຣມ. ມີພວກຊຸນນາງ ແລະ ພວກເຈົ້າແຂວງບາງຄົນບອກເພິ່ນວ່າ ຖ້າເພິ່ນຍັງດັນທຸລັງທີ່ຈະຕັ້ງຄວາມຄິດເຫັນສ່ວນຕົວໄວ້ຕໍ່ຕ້ານ ຄຣິສຕະຈັກ ແລະ ມະຕິສະພາແລ້ວ, ໃນບໍ່ຊ້າ, ເພິ່ນຈະຖືກເນລະເທດອອກຈາກອານາຈັກ ແລະ ຈະ ບໍ່ມີຜູ້ໃດປົກປ້ອງຄຸ້ມຄອງ. ລູເທີຕອບຂໍ້ຮຽກຮ້ອງນີ້ວ່າ: “ທຸກຄັ້ງທີ່ມີການປະກາດຂ່າວປະເສີດຂອງ ພຣະຄຣິສ ກໍຍ່ອມມີບາງຄົນຂຸ່ນເຄືອງໃຈ. . . . ແລ້ວມີເຫດຜົນອັນໃດແດ່ ທີ່ຂ້າພະເຈົ້າຄວນແຍກຈາກ

[34] ໝາຍເຖິງລູເທີ.

[35] ມາຕິນ (Martyn), ເຫຼັ້ມ 1, ໜ້າ 404.

ພຣະອົງເພາະຢ້ານອັນຕະລາຍ, ເປັນຫຍັງຈະໃຫ້ຄວາມຢ້ານກົວແຍກຂ້າພະເຈົ້າອອກຈາກພຣະຄຳ ຂອງພຣະເຈົ້າ ອັນເປັນສິ່ງດຽວເທົ່ານັ້ນທີ່ເປັນຄວາມຈິງ? ຂ້າພະເຈົ້າບໍ່ຍອມ, ແຕ່ຍິນດີສະຫຼະເລືອດ ເນື້ອ ແລະ ຊີວິດດີກວ່າ."[36] *{GC 165.2}*

ແລ້ວກໍມີຄົນມາຂໍຮ້ອງເພີ່ນອີກໃຫ້ຍອມຕໍ່ຄຳຕັດສິນຂອງຈັກກະພັດ ແລະ ຈະບໍ່ຕ້ອງຢ້ານຫຍັງອີກຕໍ່ ໄປ. ລູເທີຕອບວ່າ: "ຂ້າພະເຈົ້າຍິນຍອມດ້ວຍສຸດຫົວໃຈ ໃຫ້ຈັກກະພັດ, ພວກເຈົ້າແຂວງ ແລະ ແມ່ນແຕ່ ຄຣິສຕຽນຜູ້ຕ່ຳຕ້ອຍທີ່ສຸດ ໃຫ້ອ່ານພິຈາລະນາ ແລະ ໄຕ່ຕອງງານຂຽນຂອງຂ້າພະເຈົ້າໂດຍມີເງື່ອນໄຂ ຢູ່ຂໍ້ດຽວຄື ຈະຕ້ອງນຳໃຊ້ພຣະຄຳຂອງພຣະເຈົ້າເປັນມາດຕະຖານໃນການພິຈາລະນາຕັດສິນ. ມະນຸດບໍ່ ມີສິ່ງໃດທີ່ຈະຕ້ອງເຮັດນອກຈາກຈະເຊື່ອຟັງພຣະຄຳນັ້ນ. ຢ່າໄດ້ຂໍໃຫ້ຂ້າພະເຈົ້າຕ້ອງຂັດຂືນຕໍ່ຈິດສຳນຶກ ຜິດຊອບຂອງຕົນເລີຍ ເພາະມັນຜູກມັດໄວ້ກັບພຣະຄຳພີອັນສັກສິດ."[37] *{GC 166.1}*

ເມື່ອຄົນອື່ນມາຂໍຮ້ອງລູເທີ ເພີ່ນຕອບວ່າ: "ຂ້າພະເຈົ້າຍິນດີຖິ້ມໃບຮັບຮອງຄວາມປອດໄພ ແລະ ຝາກຊີວິດຂອງຂ້າພະເຈົ້າໄວ້ໃນມືຂອງຈັກກະພັດ ແຕ່ຈະບໍ່ມີວັນທີ່ຈະມອບພຣະຄຳຂອງພຣະເຈົ້າໃຫ້ ແກ່ເພີ່ນ!"[38] ລູເທີກ່າວວ່າ ເພີ່ນຍິນດີເຮັດຕາມມະຕິຂອງສະພາຄຣິສຕະຈັກ ໂດຍມີເງື່ອນໄຂຢູ່ຂໍ້ ດຽວວ່າ ສະພານັ້ນຈະຕ້ອງຕັດສິນຕາມພຣະຄຳພີ. ເພີ່ນກ່າວເພີ່ມເຕີມວ່າ: "ໃນເລື່ອງພຣະຄຳຂອງ ພຣະເຈົ້າ ແລະ ຄວາມເຊື່ອນັ້ນ ຄຣິສຕຽນທຸກຄົນມີອຸດທິພາວະໃນການພິຈາລະນາຕັດສິນບໍ່ດ້ອຍກວ່າ ສັນຕະປາປາ ເຖິງແມ່ນວ່າເພີ່ນຈະມີມະຕິສະພານັບລ້ານສະໄໝມາສະໜັບສະໜູນກໍຕາມ."[39] ຄົນທີ່ ສະໜັບສະໜູນ ແລະ ຄົນທີ່ຕໍ່ຕ້ານລູເທີລ້ວນແຕ່ເຫັນພ້ອມກັນວ່າ ບໍ່ມີປະໂຫຍດທີ່ຈະພະຍາຍາມໃຫ້ ເພີ່ນກັບມາຄືນດີກັບຄຣິສຕະຈັກໂຣມ. *{GC 166.2}*

ຖ້າຫາກວ່າລູເທີຍອມໃນປະເດັນດຽວ, ຊາຕານ ແລະ ພັກພວກຂອງມັນກໍຈະເປັນຝ່າຍຊະນະ. ແຕ່ ພຣະເຈົ້າຊົງໃຊ້ຄວາມໜັກແໜ້ນບໍ່ຫວັ່ນໄຫວຂອງເພີ່ນເພື່ອປົດປ່ອຍຄຣິສຕະຈັກ ແລະ ເພື່ອເລີ່ມຕົ້ນ ສະໄໝໃໝ່ທີ່ດີກວ່າ. ອິດທິພົນຂອງຊາຍຄົນນີ້ພຽງຄົນດຽວທີ່ກ້າຄິດກ້າທຳດ້ວຍຕົນເອງໃນເລື່ອງທີ່ ກ່ຽວຂ້ອງກັບສາສະໜາ ສ້າງຜົນດີໃຫ້ແກ່ຄຣິສຕະຈັກ ແລະ ຄົນທັງໂລກ ບໍ່ພຽງແຕ່ໃນສະໄໝຂອງ ເພີ່ນ ແຕ່ຕໍ່ທຸກສະໄໝຕັ້ງແຕ່ນັ້ນມາ. ຄວາມໜັກແໜ້ນ ແລະ ຄວາມສັດຊື່ຂອງເພີ່ນຈະຊ່ວຍເສີມກຳລັງໃຫ້ ແກ່ທຸກຄົນທີ່ຈະຕ້ອງຜ່ານປະສົບການແບບດຽວກັນຈົນວັນສິ້ນໂລກ. ສະຫງ່າຣາສີ ແລະ ຣິດທານຸພາບ ຂອງພຣະເຈົ້າມີໄຊເໜືອແຜນການຂອງມະນຸດ ແລະ ອຳນາດຍິ່ງໃຫຍ່ຂອງຊາຕານ. *{GC 166.3}*

ໃນບໍ່ຊ້າ, ມີຣາຊໂອງການໃຫ້ລູເທີກັບເມືອບ້ານ ເຊິ່ງເພີ່ນຊາບວ່າຈະມີການປະກາດລົງໂທດຕາມ ມາທັນທີ. ຫົນທາງທີ່ຕ້ອງດຳເນີນນັ້ນເໝືອນຖືກປົກຄຸມໄປດ້ວຍເມກດຳ ແຕ່ໃນຂະນະທີ່ເພີ່ນເດີນທາງ ອອກຈາກເມືອງເວີມ ຈິດໃຈກໍເຕັ້ມໄປດ້ວຍຄຳສັນລະເສີນ ແລະ ຄວາມຊົມຊື່ນຍິນດີ. ເພີ່ນກ່າວ ວ່າ: "ຜີມານຮ້າຍເອງເຝົ້າຄຸ້ມຄອງຫໍຄອຍຂອງສັນຕະປາປາ, ແຕ່ພຣະຄຣິສຊົງພັງເຂົ້າໄປເປັນຊ່ອງ ກວ້າງ, ຈົນຊາຕານຕ້ອງຍອມຮັບວ່າ ພຣະອົງຊົງຣິດເຂັ້ມແຂງກວ່າມັນ."[40] *{GC 166.4}*

ຫຼັງຈາກທີ່ອອກເດີນທາງ ລູເທີຂຽນຈົດໝາຍເຖິງຈັກກະພັດ ເພາະຢ້ານວ່າຈະມີຄົນເຫັນຄວາມ ໜັກແໜ້ນຂອງເພີ່ນ ແລະ ຕີຄວາມວ່າເພີ່ນເປັນກະບົດ. ໃນຈົດໝາຍສະບັບນັ້ນເພີ່ນຂຽນວ່າ: "ພຣະເຈົ້າ ຜູ້ຊົງສຳຫຼວດຄົ້ນເບິ່ງຈິດໃຈຂອງມະນຸດ ຊົງເປັນພະຍານໃຫ້ຂ້າພະເຈົ້າວ່າ ຂ້າພະເຈົ້າພ້ອມສະເໝີທີ່ຈະ

[36] ໂດບິນເຍ, ເຫຼັ້ມ 7, ບົດ 10.
[37] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 10.
[38] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 10.
[39] ມາຕິນ (Martyn), ເຫຼັ້ມ 1, ໜ້າ 410.
[40] ໂດບິນເຍ, ເຫຼັ້ມ 7, ບົດ 11.

ປະຕິບັດຕາມຄຳສັ່ງຂອງຝ່າບາດ, ບໍ່ວ່າໃນເລື່ອງທີ່ເປັນກຽດ ຫຼື ບໍ່ເປັນກຽດ, ດ້ວຍຊີວິດ ຫຼື ຄວາມຕາຍ, ໂດຍມີຂໍ້ຍົກເວັ້ນຢູ່ຂໍ້ດຽວຄືພຣະຄຳຂອງພຣະເຈົ້າ ເພາະມະນຸດດຳລົງຊີວິດດ້ວຍພຣະຄຳນັ້ນ. ໃນເລື່ອງທີ່ກ່ຽວຂ້ອງກັບຊີວິດນີ້ ຂ້າພະເຈົ້າຈົງຮັກພັກດີຕໍ່ຝ່າບາດໂດຍບໍ່ຫວັ່ນໄຫວ ເພາະການເປັນຝ່າຍໄດ້ຝ່າຍເສຍໃນໂລກບໍ່ໄດ້ກະທົບຕໍ່ຄວາມລອດພົ້ນ. ແຕ່ໃນເລື່ອງທີ່ກ່ຽວຂ້ອງກັບຊີວິດນິຣັນ ພຣະເຈົ້າບໍ່ປະສົງໃຫ້ມະນຸດຍອມຈຳນົນຕໍ່ມະນຸດຄົນອື່ນ, ເພາະການຍອມຈຳນົນໃນເລື່ອງທີ່ກ່ຽວຂ້ອງກັບຈິດວິນຍານ ກໍຄືການນະມັດສະການຢ່າງແທ້ຈິງ ແລະ ເຮົາຄວນນະມັດສະການພຣະຜູ້ສ້າງແຕ່ຜູ້ດຽວ.”[41] *{GC 167.1}*

ໃນການເດີນທາງກັບຈາກເມືອງເວີມນັ້ນ ມີຄົນອອກມາຕ້ອນຮັບລູເທີດີກວ່າຕອນທີ່ເພິ່ນເດີນທາງໄປເສຍອີກ. ມີຜູ້ນຳຄຣິສຕະຈັກຊັ້ນສູງຕ້ອນຮັບນັກບວດທີ່ຖືກຕັດຊື່ອອກຈາກຄຣິສຕະຈັກ ແລະ ມີຜູ້ນຳຝ່າຍອຳນາດການປົກຄອງອອກມາຮັບຕ້ອນຜູ້ທີ່ຈັກກະພັດກ່າວປະນາມ. ມີຄົນຂໍຮ້ອງໃຫ້ລູເທີເທດສະໜາ ແລະ ເຖິງແມ່ນວ່າມີຄຳສັ່ງຂອງຈັກກະພັດບໍ່ໃຫ້ເພິ່ນເທດ ແຕ່ເພິ່ນກໍຍັງຂຶ້ນທຳມາດອີກ ແລະ ກ່າວວ່າ: “ຂ້າພະເຈົ້າບໍ່ເຄີຍປະຕິຍານຕົນວ່າຈະເອົາພຣະຄຳຂອງພຣະເຈົ້າມາລ່າມໂສ້ ແລະ ຈະບໍ່ມີວັນນັ້ນເລີຍ.”[42] *{GC 167.2}*

ຫຼັງຈາກລູເທີອອກຈາກເມືອງເວີມບໍ່ດົນ ພວກຝ່າຍສັນຕະປາປາໂນ້ມນ້າວຈັກກະພັດໄດ້ສຳເລັດ ໃຫ້ອອກຄຳສັ່ງປະນາມເພິ່ນເປັນທາງການ ເຊິ່ງມີເນື້ອໃນວ່າ ລູເທີຄື “ຊາຕານເອງໃນຮູບຮ່າງຂອງມະນຸດ ທີ່ໃສ່ເສື້ອຄຸມຂອງນັກບວດ.”[43] ນອກຈາກນັ້ນ, ກໍຍັງສັ່ງວ່າ ທັນທີທີ່ໃບຮັບຮອງຄວາມປອດໄພຂອງລູເທີໝົດອາຍຸ ໃຫ້ມີການອອກມາດຕະການເພື່ອຢຸດຍັ້ງວຽກງານຂອງເພິ່ນ. ທຸກຄົນຖືກຫ້າມບໍ່ໃຫ້ຊ່ວຍເຫຼືອເພິ່ນໃນທຸກກໍລະນີ ບໍ່ວ່າທາງວາຈາ ຫຼື ການກະທຳ, ເປັນການສ່ວນຕົວ ຫຼື ເປັນທາງການ, ຢ່າໃຫ້ຜູ້ໃດອຳນວຍສະຖານທີ່ໃຫ້ເພິ່ນຫຼົບຊ່ອນ ແລະ ຢ່າໃຫ້ອາຫານ ຫຼື ນ້ຳແກ່ເພິ່ນເລີຍ; ແຕ່ບໍ່ວ່າເພິ່ນຢູ່ທີ່ໃດກໍຕາມ ໃຫ້ຈັບກຸມ ແລະ ສົ່ງມອບໃຫ້ເຈົ້າໜ້າທີ່. ສ່ວນຜູ້ທີ່ເຊື່ອຖືຕາມເພິ່ນກໍໃຫ້ຈັບຂັງຄຸກເຊັ່ນກັນ ແລະ ຍຶດຊັບສິນ, ໃຫ້ທຳລາຍບົດຄວາມງານຂຽນຂອງເພິ່ນ ແລະ ສຸດທ້າຍຜູ້ໃດກໍຕາມທີ່ກ້າຝ່າຝືນຕໍ່ຄຳສັ່ງນີ້ ກໍໃຫ້ປະຕິບັດຕໍ່ເຂົາຕາມຄຳສັ່ງທຸກປະການໃນສະບັບນີ້. ເຈົ້າແຂວງແຊັກຊັນນີຜູ້ມີສິດເລືອກຈັກກະພັດ ແລະ ບັນດາເຈົ້າແຂວງທີ່ເປັນມິດກັບລູເທີຫຼາຍທີ່ສຸດ ໄດ້ອອກຈາກເມືອງເວີມຫຼັງລູເທີບໍ່ດົນ; ສະນັ້ນ, ສະພາຈຶ່ງຮັບຮອງຄຳສັ່ງຂອງຈັກກະພັດ. ພວກທີ່ສະໜັບສະໜຸນຄຣິສຕະຈັກໂຣມພາກັນສະເຫຼີມສະຫຼອງ ເພາະຄິດວ່າຂະບວນການປະຕິຮູບນັ້ນໄດ້ມາເຖິງທີ່ສິ້ນສຸດແລ້ວ. *{GC 167.3}*

ພຣະເຈົ້າເປີດທາງໃຫ້ໜີໄພ

ພຣະເຈົ້າຊົງຈັດຫຼຸມທາງໜີໃນຊົ່ວໂມງວິກິດໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງ ໂດຍໃຫ້ມີຄົນຈິດໃຈສູງ ແລະ ຈິງໃຈ ຈັບຕາເຝົ້າສັງເກດການເຄື່ອນໄຫວຂອງລູເທີ ຄືເຟຣເດີຣິກເຈົ້າແຂວງແຊັກຊັນນີຜູ້ໝາຍໝັ້ນປັ້ນມືທີ່ຈະຊ່ວຍເພິ່ນໃຫ້ພົ້ນໄພ. ການທີ່ຄຣິສຕະຈັກໂຣມຈະບໍ່ພໍໃຈຈົນກວ່າລູເທີຕາຍເປັນເລື່ອງທີ່ເຫັນໄດ້ຢ່າງແຈ່ມແຈ້ງ, ການເຊື່ອງຊ່ອນເພິ່ນເປັນຫົນທາງດຽວທີ່ຈະໃຫ້ເພິ່ນພົ້ນຈາກປາກຂອງສິງໂຕໄດ້. ພຣະເຈົ້າຊົງໃຫ້ສະຕິປັນຍາແກ່ເຈົ້າແຂວງໃຫ້ວາງແຜນຊ່ວຍຊີວິດຂອງລູເທີ ໂດຍມີພວກມິດແທ້ລົງມືໃຫ້ແຜນການນັ້ນສຳເລັດ; ຢ່າງນີ້ແຫຼະ, ລູເທີຈຶ່ງໄດ້ຮັບການເຊື່ອງຊ່ອນໄວ້ຈາກທັງຄົນທີ່ເຫັນດ້ວຍ ແລະ ພວກທີ່ຕໍ່ຕ້ານ. ມີຄົນຈັບເພິ່ນໃນລະຫວ່າງການເດີນທາງກັບບ້ານ ແລະ ແຍກເພິ່ນອອກຈາກພວກທີ່ເດີນທາງ

[41] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 7, ບົດ 11.
[42] ມາຕິນ (Martyn), ເຫຼັ້ມ 1, ໜ້າ 420.
[43] ໂດບິນເຍ, ເຫຼັ້ມ 7, ບົດ 11.

ນຳ ແລ້ວພາເພິ່ນຜ່າປ່າໄມ້ໄປຍັງຜາສາດຫີນແຫ່ງວາດເບີກ (Wartburg) ຢ່າງຮີບດ່ວນ ເຊິ່ງເປັນປ້ອມປາການສອກຫຼີກໃນເຂດພູຜາ. ການຈັບຂ່ອນລູເທີເປັນໄປຢ່າງເລິກລັບ ຈົນແມ່ນແຕ່ເຈົ້າແຂວງເຟຣເດີຣິກເອງກໍບໍ່ຮູ້ເປັນເວລາດົນວ່າເພິ່ນຖືກນຳພາໄປໄວ້ບ່ອນໃດ. ການທີ່ເຈົ້າແຂວງບໍ່ຮູ້ວ່າລູເທີຢູ່ໃສກໍເປັນໄປຕາມແຜນ ເພາະວ່າຕາບໃດທີ່ເພິ່ນບໍ່ຮູ້ວ່າລູເທີຢູ່ໃສ ເພິ່ນກໍບໍ່ສາມາດເປີດເຜີຍໃຫ້ຄົນອື່ນໄດ້. ພຽງຮູ້ວ່າລູເທີປອດໄພກໍເຮັດໃຫ້ເຈົ້າແຂວງຮູ້ສຶກພໍໃຈ. *{GC 168.1}*

ລະດູໃບໄມ້ປົ່ງປ່ຽນເປັນລະດູຮ້ອນ, ລະດູຮ້ອນລ່ວງເລີຍໄປເປັນລະດູໃບໄມ້ຫຼົ່ນ, ລະດູໃບໄມ້ຫຼົ່ນຜ່ານພົ້ນໄປເປັນລະດູໜາວ ແລະ ລູເທີຍັງຖືກຂັງຢູ່ບ່ອນເກົ່າ. ອະລິອັນເດີພ້ອມດ້ວຍພັກພວກພາກັນສະຫຼອງໄຊຊະນະເພາະເຫັນວ່າ ແສງແຫ່ງຂ່າວປະເສີດໃກ້ຈະຖືກດັບລົງ. ແຕ່ແທນທີ່ຈະຖືກດັບມອດໄປ, ລູເທີກຳລັງເຕີມນ້ຳມັນໃສ່ຕະກຽງຈາກພຣະຄຳແຫ່ງຄວາມຈິງ ເພື່ອສ່ອງສະຫວ່າງໃຫ້ຮຸ່ງແຈ້ງຂຶ້ນອີກ. *{GC 168.2}*

ຊ່ວງທຳອິດທີ່ພັກຢ່າງປອດໄພຢູ່ວາດເບີກນັ້ນ ລູເທີຮູ້ສຶກໂລ່ງໃຈທີ່ໄດ້ພັກເຊົາຈາກການຕໍ່ສູ້ທີ່ດຸເດືອດ, ແຕ່ເພິ່ນບໍ່ສາມາດພໍໃຈໃນການຢູ່ລ້າເປັນເວລາດົນ ເພາະເພິ່ນເປັນຄົນຂະຫຍັນໝັ່ນພຽນ ແລະ ລ້ຽງເຄີຍກັບການຕໍ່ສູ້ ຈະຢູ່ລ້າຕໍ່ໄປກໍຈະບໍ່ເປັນຜົນດີ. ໃນຊ່ວງເວລາທີ່ຕ້ອງຢູ່ຢ່າງໂດດດ່ຽວນັ້ນ ເພິ່ນຄິດເຖິງສະພາບຂອງຄຣິສຕະຈັກ ຈຶ່ງຮ້ອງອອກມາດ້ວຍຄວາມທໍ້ໃຈວ່າ: “ເປັນຕາໜ້າເສົ້າທີ່ສຸດ! ໃນວາລະສຸດທ້າຍແຫ່ງພຣະພິໂຣດຂອງພຣະເຈົ້າ ບໍ່ມີໃຜຢືນຂຶ້ນດັ່ງກຳແພງຕໍ່ໜ້າພຣະອົງ ແລະ ຊ່ວຍຊາວອິດສະຣາເອນໃຫ້ພົ້ນ!”[44] ແລ້ວເພິ່ນກໍຫວນຄິດເຖິງຕົນເອງ ຢ້ານວ່າຈະມີຄົນຫາວ່າເພິ່ນຂີ້ຂາດຕາຂາວທີ່ຖອຍອອກຈາກການຕໍ່ສູ້. ຈາກນັ້ນກໍຕຳໜິຕົວເອງທີ່ຢູ່ລ້າ ແລະ ຕາມໃຈຕົວເອງ; ຢ່າງໃດກໍຕາມ, ທຸກມື້ທຸກວັນເພິ່ນໄດ້ເຮັດວຽກຫຼາຍກວ່າທີ່ມະນຸດຄົນໜຶ່ງໜ້າຈະເຮັດໄດ້. ປາກກາຂອງເພິ່ນບໍ່ເຄີຍຢູ່ລ້າ, ໃນຂະນະທີ່ພວກສັດຕູພາກັນດີອົກດີໃຈທີ່ລູເທີຖືກປິດປາກໃຫ້ງຽບ, ພວກເຂົາກໍຕ້ອງງົງ ແລະ ສະດຸ້ງຕົກໃຈທີ່ເຫັນຫຼັກຖານວ່າເພິ່ນຍັງມີຊີວິດ ແລະ ຍັງເຮັດວຽກຢູ່. ເພິ່ນຂຽນບົດຄວາມຫຼາຍຕໍ່ຫຼາຍສະບັບ ແລະ ສົ່ງອອກໄປທົ່ວອານາຈັກເຢຍລະມັນ. ນອກຈາກນັ້ນ, ເພິ່ນຍັງຮັບໃຊ້ຄົນຮ່ວມຊາດດ້ວຍຜົນງານທີ່ສຳຄັນທີ່ສຸດ ຄືການແປພຣະຄຳພີໃໝ່ເປັນພາສາເຢຍລະມັນ. ປ້ອມຫີນທີ່ເພິ່ນຢູ່ເໝືອນດັ່ງເກາะປັດໂມ;[45] ເພິ່ນຢູ່ທີ່ນັ້ນເກືອບໜຶ່ງປີ ແລະ ໃຊ້ເວລາປະກາດຂ່າວປະເສີດ, ຕັກເຕືອນເລື່ອງຄວາມບາບ ແລະ ຄຳສອນທຽມເທັດທີ່ແຜ່ຫຼາຍໃນສະໄໝນັ້ນ. *{GC 168.3}*

ພຣະເຈົ້າບໍ່ໄດ້ຊ່ວຍໃຫ້ລູເທີຕ້ອງຖອນຕົວອອກຈາກການຮັບໃຊ້ຢູ່ແນວໜ້າ ເພື່ອໃຫ້ເພິ່ນພົ້ນຈາກຄວາມໂກດຮ້າຍຂອງສັດຕູພຽງຢ່າງດຽວ. ພຣະປະສົງຫຼັກໃນເລື່ອງນີ້ບໍ່ແມ່ນເພື່ອໃຫ້ເພິ່ນມີເວລາຂຽນ ເຊິ່ງເປັນວຽກງານທີ່ສຳຄັນ, ແຕ່ມີສິ່ງທີ່ສຳຄັນຍິ່ງກວ່ານັ້ນອີກ. ການທີ່ລູເທີພັກຢູ່ໂດດດ່ຽວໃນບ່ອນສອກຫຼີກທີ່ປ້ອມຫີນແຫ່ງພູຜາຫ່າງໄກຈາກຜູ້ສະໜັບສະໜູນ ແລະ ສຽງຍ້ອງຍໍສັນລະເສີນນັ້ນ ຊ່ວຍໃຫ້ເພິ່ນປອດໄພຈາກຄວາມຫຍິ່ງ ແລະ ຄວາມໝັ້ນໃຈໃນຕົວເອງທີ່ຫຼາຍຄັ້ງມາພ້ອມກັບຄວາມສຳເລັດ. ທີ່ຜ່ານມາລູເທີໄດ້ຖືກຍົກຂຶ້ນຈາກທີ່ຕ່ຳມາຢູ່ທີ່ສູງຢ່າງໄວວາ, ແລ້ວຄວາມທຸກ ແລະ ການຕົກຕ່ຳທີ່ເພິ່ນຕ້ອງປະເຊີນຢູ່ໃນຂະນະນີ້ ກຳລັງກຽມເພິ່ນໃຫ້ສາມາດຢ່າງຢູ່ບ່ອນທີ່ສູງຢ່າງປອດໄພອີກ ອັນເປັນບ່ອນທີ່ສ່ຽງຕໍ່ການສະດຸດລົ້ມຍ້ອນຄວາມຫຍິ່ງກົ່ນຫົວ. *{GC 169.1}*

ເມື່ອຜູ້ຄົນຊົມຊື່ນຍິນດີກັບເສລີພາບອັນເປັນຜົນຂອງຫຼັກຄວາມຈິງນັ້ນ ພວກເຂົາມັກຈະຍົກຍໍຄົນທີ່ພຣະເຈົ້າຊົງໃຊ້ເພື່ອຫັກສາຍໂສ້ແຫ່ງຄວາມເທັດ ແລະ ຄວາມງົມງວາຍ. ຊາຕານມຸ່ງໝາຍທີ່ຈະຫັນ

[44] *ອ້າງອີງຈາກທີ່ດຽວກັນ,* ເຫຼັ້ມ 9, ບົດ 2.

[45] ບ່ອນທີ່ໂຢຮັນຂຽນພຣະທຳພຣະນິມິດ. ເບິ່ງ ພຣະນິມິດ 1:9.

ຄວາມຄິດ ແລະ ຄວາມຊື່ນຊົມຂອງມະນຸດອອກຈາກພຣະເຈົ້າ ແລ້ວມາໃຫ້ຄວາມສຳຄັນກັບຜູ້ຮັບໃຊ້ຂອງພຣະອົງແທນ; ມັນຫຼອກມະນຸດໃຫ້ນັບຖືຜູ້ທີ່ພຣະເຈົ້າຊົງໃຊ້ຈົນລືມພຣະອົງຜູ້ຊົງນຳເຫດການຕ່າງ ໆ ຕາມນ້ຳພຣະໄທຂອງພຣະອົງ. ຫຼາຍຄັ້ງຜູ້ນຳສາສະໜາທີ່ໄດ້ຮັບການຍົກຍໍ ແລະ ເປັນທີ່ນັບໜ້າຖືຕາ ເຊັ່ນນີ້ຈະຫຼົງລືມວ່າ ຕົນເອງຕ້ອງການຄວາມຊ່ວຍເຫຼືອຈາກພຣະເຈົ້າຈົ່ງໜັນມາເພິ່ງພາຕົນເອງ. ຜົນຕາມມາກໍຄື ພວກເຂົາພະຍາຍາມຄວບຄຸມຄວາມຄິດ ແລະ ຈິດສຳນຶກຜິດຊອບຂອງສະມາຊິກທີ່ຄອຍຟັງຄຳແນະນຳຈາກຜູ້ນຳແທນທີ່ຈະອ່ານພຣະຄຳຂອງພຣະເຈົ້າ. ຫຼາຍຄັ້ງການປະຕິຮູບຕ້ອງຊະລໍລົງຍ້ອນຜູ້ສະໜັບສະໜູນເພິ່ງພາມະນຸດແທນທີ່ຈະເພິ່ງພາພຣະເຈົ້າ. ພຣະເຈົ້າຊົງໃຫ້ລູເທີອອກມາຈາກການຕໍ່ສູ້ແນວໜ້າເພື່ອຊ່ວຍຂະບວນການປະຕິຮູບໃຫ້ພົ້ນຈາກອັນຕະລາຍໃນເລື່ອງນີ້, ພຣະອົງບໍ່ມີພຣະປະສົງໃຫ້ວຽກງານນີ້ເປັນໄປຕາມລັກສະນະຂອງມະນຸດ ແຕ່ໃຫ້ເປັນຜົນຈາກຝີພຣະຫັດຂອງພຣະເຈົ້າ. ທີ່ຜ່ານມາດວງຕາທຸກຄົນໄດ້ຈັບຈ້ອງໄປຍັງລູເທີໃນຖານະທີ່ເປັນຜູ້ອະທິບາຍຫຼັກຄວາມຈິງ; ບັດນີ້, ເພິ່ນຕ້ອງອອກຈາກແນວໜ້າ ເພື່ອໃຫ້ຕາທຸກຄົນຫັນໄປຍັງພຣະເຈົ້າອົງນິຣັນຜູ້ຊົງເປັນປະຖົມເຫດແຫ່ງຄວາມຈິງທັງປວງ. *{GC 169.2}*

ຕໍ່ໜ້າອົງຈັກກະພັດ ແລະ ສະພາທີ່ເມືອງເວີມ ລູເທີຕອບວ່າ: “ຖ້າບໍ່ໄດ້ພິສູດ ຈາກພຣະຄຳພີໃຫ້ຂ້າພະເຈົ້າແນ່ໃຈ ຫຼື ໃຊ້ເຫດຜົນຈົນຂ້າພະເຈົ້າເຂົ້າໃຈ, ຖ້າບໍ່ສາມາດ ອະທິບາຍຂໍ້ພຣະຄຳພີທີ່ຂ້າພະເຈົ້າກ່າວມານັ້ນ ເພື່ອພິສູດວ່າຂ້າພະເຈົ້າຜິດ, ຈິດສຳນຶກ ຜິດຊອບຂອງຂ້າພະເຈົ້າຕ້ອງຖືກຄວບຄຸມດ້ວຍພຣະຄຳຂອງພຣະເຈົ້າ. ຕາບໃດທີ່ພິສູດບໍ່ໄດ້, *ຂ້າພະເຈົ້າບໍ່ສາມາດຖອນຄຳສອນໄດ້ເຊັ່ນກັນ ແລະ ຈະບໍ່ຖອນ* ເພາະວ່າການທີ່ຄຣິສຕຽນຄົນໃດຈະ ກ່າວໃນສິ່ງທີ່ຂັດຕໍ່ຈິດສຳນຶກຜິດຊອບນັ້ນເປັນສິ່ງທີ່ບໍ່ປອດໄພ. ຂ້າພະເຈົ້າຂໍຢືນຢັດຢູ່ຈຸດນີ້ ແລະ ບໍ່ສາມາດເຮັດສິ່ງອື່ນໄດ້ເລີຍ. ຂໍພຣະເຈົ້າຊົງຊ່ວຍຂ້າພະເຈົ້າແດ່ທ້ອນ. ອາແມນ.”

ເບິ່ງໜ້າ 119.

Image generated with AI (Google Gemini).

9

ນັກປະຕິຮູບຊາວສວິສ

ອຸນຣິກ ສວິງລີ

ພຣະເຈົ້າຊົງເລືອກຄົນໃຫ້ປະຕິຮູບຄຣິສຕະຈັກ ທີ່ມີລັກສະນະເໝືອນພວກສາວົກທີ່ພຣະອົງຊົງເລືອກ ໃນການກໍ່ຕັ້ງຄຣິສຕະຈັກ. ພຣະເຢຊູຄຣິສຊົງເບິ່ງຂ້າມຄົນທີ່ຊາວໂລກຖືວ່າສຳຄັນ, ພຣະອົງບໍ່ໄດ້ເລືອກ ຄົນຮັ່ງມີ ຫຼື ຄົນທີ່ມີຍົດຖາບັນດາສັກ ຜູ້ລຶ້ງເຄັຍກັບການຮັບຄຳສັນລະເສີນຈາກປະຊາຊົນ ແລະ ການ ນັບໜ້າຖືຕາໃນຖານະຜູ້ນຳ. ຄົນເຊັ່ນນີ້ມີຄວາມຫຍິ່ງທະນົງໂຕ, ມີຄວາມໝັ້ນໃຈໃນຕົວເອງ ແລະ ອວດ ຖານະຂອງຕົນ; ມັນຈຶ່ງເປັນໄປບໍ່ໄດ້ ທີ່ຈະປັ້ນພວກເຂົາໃຫ້ມີຄວາມອີ່ຕົນສົ່ງສານຕໍ່ເພື່ອນມະນຸດດ້ວຍ ກັນ ແລະ ມາຮ່ວມວຽກງານກັບພຣະເຢຊູໄທມາຊາເຣັດ ຜູ້ມີຄວາມນອບນ້ອມຖ່ອມຕົນ. ພຣະອົງຊົງ ຮຽກເອີ້ນຊາວປະມົງແຫ່ງແຂວງຄາລິເລທີ່ບໍ່ມີການສຶກສາ ແຕ່ຮູ້ຈັກເຮັດວຽກໜັກ ໂດຍຊົງກ່າວວ່າ: “ຈົ່ງ ຕາມເຮົາມາ ແລະ ເຮົາຈະສອນພວກເຈົ້າໃຫ້ເປັນຜູ້ຫາຄົນ.” (ມັດທາຍ 4:19). ສາວົກເຫຼົ່ານີ້ມີຄວາມ ນອບນ້ອມຖ່ອມຕົນ ແລະ ຍອມໃຫ້ພຣະອົງສັ່ງສອນ. ຍິ່ງພວກເຂົາບໍ່ໄດ້ຮັບອິດທິພົນຈາກຄຳສອນ ທຽມເທັດໃນສະໄໝນັ້ນ ພຣະອົງຍິ່ງສາມາດອົບຮົມສັ່ງສອນໃນການຮັບໃຊ້ພຣະອົງ. ໃນສະໄໝປະຕິຮູບ ສາສະໜາຄັ້ງໃຫຍ່ນັ້ນກໍເຊັ່ນກັນ; ພວກຜູ້ນຳຂະບວນການປະຕິຮູບເປັນຊາຍເຊິ່ງມາຈາກຄອບຄົວທີ່ ຕ່ຳຕ້ອຍ, ເປັນຄົນທີ່ບໍ່ມີຄວາມຫຍິ່ງໃນຍົດຕຳແໜ່ງ, ທັງເປັນຄົນທີ່ບໍ່ໄດ້ຮັບອະຄະຕິ ຫຼື ເລ່ລຸ່ມຈາກ ພວກບາດຫຼວງຂອງຄຣິສຕະຈັກໂຣມ. ພຣະເຈົ້າມີພຣະປະສົງທີ່ຈະໃຊ້ຄົນຕ່ຳຕ້ອຍ ເພື່ອຜົນສຳເລັດທີ່ ຍິ່ງໃຫຍ່; ເພື່ອວ່າແທນທີ່ຄົນທັງຫຼາຍຈະຍົກຍ້ອງສັນລະເສີນມະນຸດດ້ວຍກັນ, ພວກເຂົາຈະຖວາຍກຽດ ແດ່ພຣະອົງ ຜູ້ດຳເນີນພຣະຣາຊກິດຜ່ານມະນຸດຕາມນ້ຳພຣະໄທຂອງພຣະອົງ. *{GC 171.1}*

ຫຼັງຈາກລູເທີເກີດໃນກະຕູບຂອງກຳມະກອນຂຸດແຮ່ໃນແຂວງແຊັກຊັນນີ 7–8 ອາທິດ, ອຸນຣິກ ສວິງລີ (Ulric Zwingli) ກໍເກີດໃນກະຕູບຂອງຄົນລ້ຽງສັດຕາມສາຍພູອານເປ (Alps). ສະພາບແວດລ້ອມ ຂອງສວິງລີໃນໄວເດັກ ແລະ ການອົບຮົມທີ່ເພິ່ນໄດ້ຮັບຕອນອາຍຸນ້ອຍ ໄດ້ກຽມເພິ່ນໄວ້ສຳລັບພັນທະກິດ ໃນອະນາຄົດ. ເພິ່ນເຕີບໂຕທ່າມກາງທຳມະຊາດທີ່ສວຍງາມເລີດລ້ຳ, ຮູ້ສຶກເຖິງຣິດອຳນາດ, ຄວາມ ຍິ່ງໃຫຍ່ ແລະ ສະຫງ່າຣາສີຂອງພຣະເຈົ້າຕັ້ງແຕ່ອາຍຸຍັງນ້ອຍ. ປະຫວັດວິລະກຳຂອງຄົນທີ່ອາໄສຕາມ ສາຍພູ ອັນເປັນບ້ານເກີດຂອງເພິ່ນ ໄດ້ຈູດປະກາຍຄວາມໃຝ່ຝັນໃນໃຈໜຸ່ມນ້ອຍຜູ້ນີ້. ຄຳສອນສ່ວນ ໃຫຍ່ຂອງຄຣິສຕະຈັກໃນສະໄໝນັ້ນເນັ້ນຕຳນານ ແລະ ທຳນຽມຂອງຄຣິສຕະຈັກ. ແຕ່ແມ່ຍ່າຂອງສວິງລີ ມີຄວາມສັດທາໃນພຣະເຈົ້າ, ນາງກອງຄຳສອນຂອງຄຣິສຕະຈັກ ແລ້ວສາມາດຄັດສັນເລື່ອງຕ່າງ ໆ ທີ່ລ້ຳຄ່າຈາກພຣະຄຳພີມາເວົ້າໃຫ້ຫຼານຟັງ. ສວິງລີນັ່ງຢູ່ຂ້າງ ໆ ແລະ ຕັ້ງໃຈຟັງແມ່ຍ່າເວົ້າເຖິງວິລະກຳ ຂອງຄົນລຸ້ນບັນພະຊົນ, ພວກຜູ້ເຜີຍພຣະທຳ, ເລື່ອງຂອງຜູ້ລ້ຽງແກະທີ່ເຝົ້າຝູງແກະຕາມເນີນພູແຫ່ງ

ປາແລັດສະໄຕເມື່ອທູດສະຫວັນຂອງພຣະເຈົ້າມາເວົ້ານຳ ແລະ ຟັງແມ່ຍ່າເວົ້າເລື່ອງທີ່ພຣະຄຣິສຊົງບັງເກີດຢູ່ບ້ານເບັດເລເຮັມ ແລະ ສິ້ນພຣະຊົນເທິງພູເຂົາຄານວາຣີ. {GC 171.2}

ພໍ່ຂອງສວິງລີເໝືອນກັບພໍ່ຂອງລູເທີໃນປະເດັນທີ່ຢາກໃຫ້ລູກຊາຍໄດ້ຮັບການສຶກສາຮ່ຳຮຽນ, ຈຶ່ງສົ່ງລູກອອກໄປຈາກບ້ານໃນຮ່ອມພູເມື່ອຍັງເປັນເດັກ. ສະໝອງຂອງເພິ່ນພັດທະນາຢ່າງໄວວາ ຈົນໃນບໍ່ຊ້ຳເປັນເລື່ອງຍາກທີ່ຈະຫານາຍຄູທີ່ມີຄວາມຮູ້ພໍທີ່ຈະສອນເພິ່ນໄດ້. ເມື່ອສວິງລີອາຍຸ 13 ປີ ເພິ່ນຍ້າຍໄປຢູ່ທີ່ເມືອງເບີນ (Bern) ເພາະທີ່ນັ້ນມີສະຖາບັນການສຶກສາທີ່ມີຊື່ສຽງໂດດເດັ່ນທີ່ສຸດໃນສວິສເຊີແລນ, ແຕ່ທີ່ນັ້ນເກີດເລື່ອງອັນຕະລາຍຂຶ້ນທີ່ເກືອບທຳລາຍອະນາຄົດຂອງເພິ່ນ. ພວກນັກບວດໝາຍໝັ້ນປັ້ນມື ເພື່ອຊັກຈູງໃຫ້ເພິ່ນເຂົ້າສຳນັກນັກບວດຂອງພວກເຂົາ. ໃນຂະນະນັ້ນ, ພວກນັກບວດຈາກສອງຄະນະໃຫຍ່ກຳລັງແຂ່ງກັນ ເພື່ອເປັນທີ່ນິຍົມຊົມຊອບຂອງປະຊາຊົນ ຄືຄະນະໂດມິນນິກັນ ແລະ ຄະນະຟຣັນຊິສກັນ. ພວກເຂົາພະຍາຍາມດຶງດູດປະຊາຊົນດ້ວຍການປະດັບໂບດຢ່າງຫຼູຫຼາ, ການເຮັດພິທີກຳອັນສະຫງ່າງາມ ແລະ ການວາງສະແດງວັດຖຸສັກສິດທີ່ມີຊື່ສຽງກັບຮູບປັ້ນທີ່ອ້າງວ່າເຮັດການອັດສະຈັນໄດ້. {GC 172.1}

ພວກນັກບວດຈາກຄະນະໂດມິນນິກັນທີ່ເມືອງເບີນເຫັນວ່າ ຖ້າສາມາດຊະນະໃຈໜຸ່ມນ້ອຍທີ່ຮຽນເກັ່ງຜູ້ນີ້ ພວກເຂົາຈະໄດ້ປະໂຫຍດ ແລະ ກຽດສັກສີ. ພວກເຂົາຄິດວ່າ ຖ້າມີຄົນຢ່າງສວິງລີທີ່ອາຍຸຍັງນ້ອຍ ແລະ ມີພອນສະຫວັນທີ່ເວົ້າເກັ່ງຂຽນເກັ່ງ, ເປັນອັດສະຣິຍະດ້ານດົນຕີ ແລະ ການແຕ່ງກາບກອນບົດກະວີນັ້ນ ກໍຈະຊ່ວຍຊັກຈູງປະຊາຊົນໃຫ້ເຂົ້າມາຮ່ວມປະຊຸມນະມັດສະການຫຼາຍກວ່າການຕົບແຕ່ງໂບດ ຫຼື ການເຮັດພິທີທີ່ໜ້າຈັບຕາ. ນອກຈາກນັ້ນ, ກໍຈະຊ່ວຍໃຫ້ຄະນະນັກບວດຂອງພວກເຂົາໄດ້ເງິນຖວາຍເພີ່ມຂຶ້ນ. ພວກນັກບວດຍົກຍໍປໍປັ້ນ ແລະ ໃຊ້ການຫຼອກລວງເພື່ອລໍ້ໃຫ້ສວິງລີເຂົ້າສຳນັກນັກບວດຂອງພວກເຂົາ. ສ່ວນລູເທີໃນຂະນະທີ່ຮຽນນັ້ນ ໄດ້ຂັງຕົວເອງໃນຫ້ອງນັກບວດ ແລະ ຄົ້ງບໍ່ໄດ້ເຮັດປະໂຫຍດໃຫ້ກັບໂລກ ຖ້າພຣະເຈົ້າບໍ່ໄດ້ຊ່ວຍປົດປ່ອຍເພິ່ນ. ແຕ່ພຣະເຈົ້າຊົງປ້ອງກັນສວິງລີຈາກອັນຕະລາຍດັ່ງກ່າວ ໂດຍຊົງນຳໃຫ້ພໍ່ຂອງເພິ່ນໄດ້ຮັບຂ່າວເຖິງແຜນການຂອງພວກນັກບວດ. ລາວຕັ້ງໃຈໄວ້ວ່າ ຈະຕ້ອງບໍ່ອະນຸຍາດໃຫ້ລູກຊາຍດຳເນີນຊີວິດແບບຢູ່ລ້າໆ ແລະ ບໍ່ເກີດປະໂຫຍດເໝືອນນັກບວດທົ່ວໄປ. ລາວເຫັນວ່າ ຖ້າລູກຈະເຮັດສິ່ງທີ່ເປັນປະໂຫຍດໃນອະນາຄົດກໍຂຶ້ນຢູ່ກັບການຕັດສິນໃຈໃນຄັ້ງນີ້, ລາວຈຶ່ງສັ່ງໃຫ້ສວິງລີກັບເມືອບ້ານໂດຍບໍ່ຕ້ອງລໍຊ້າ. {GC 172.2}

ສວິງລີໄດ້ເຮັດຕາມຄຳສັ່ງຂອງພໍ່ ແຕ່ກໍບໍ່ພໍໃຈທີ່ຈະຢູ່ບ້ານດົນ; ບໍ່ຊ້າເພິ່ນໄປທີ່ເມືອງບາເຊັນ (Basel) ເພື່ອສຶກສາຕໍ່. ທີ່ເມືອງບາເຊັນນີ້ເອງສວິງລີໄດ້ຍິນຂ່າວປະເສີດຄັ້ງທຳອິດ ເຖິງເລື່ອງພຣະຄຸນທີ່ພຣະເຈົ້າປະທານໂດຍບໍ່ຄິດມູນຄ່າ. ພຣະເຈົ້າຊົງນຳອາຈານສອນພາສາບູຮານຊື່ວິດເທັມບາກ (Wittembach) ໃຫ້ອ່ານພຣະຄຳພີໃນຂະນະທີ່ກຳລັງສຶກສາພາສາກຣີກ ແລະ ພາສາເຮັບເຣີ ລາວຈຶ່ງແບ່ງປັນແສງສະຫວ່າງທີ່ໄດ້ຮັບນັ້ນໃຫ້ພວກລູກສິດ. ລາວສອນວ່າມີຄວາມຈິງທີ່ເກົ່າແກ່ກວ່າ ແລະ ລ້ຳຄ່າກວ່າທິດສະດີຕ່າງໆ ຂອງພວກນັກວິຊາການ ແລະ ນັກປັດຊະຍາ. ຄວາມຈິງບູຮານນີ້ຄື ການສິ້ນພຣະຊົນຂອງພຣະຄຣິສເປັນສິ່ງດຽວທີ່ສາມາດໄຖ່ບາບຂອງມະນຸດໄດ້. ສຳລັບສວິງລີແລ້ວ ຖ້ອຍຄຳເຫຼົ່ານີ້ເໝືອນແສງທຳອິດກ່ອນອາລຸນເບີກຟ້າ. {GC 173.1}

ອຸທິດຕົນໃນການຄົ້ນຄວ້າພຣະຄຳພີ

ໃນບໍ່ຊ້າສວິງລີຖືກຮຽກເອີ້ນໃຫ້ຍ້າຍຈາກເມືອງບາເຊັນເພື່ອເລີ່ມວຽກງານສຳຄັນແຫ່ງຊີວິດ. ສະຖານທີ່ເຮັດວຽກຄັ້ງທຳອິດນັ້ນ ແມ່ນໂບດແຫ່ງໜຶ່ງໃນເຂດສາຍພູອານເບ ບໍ່ໄກຈາກຮ່ອມພູອັນເປັນບ່ອນເກີດ

ຂອງເພິ່ນ. ຫຼັງຈາກທີ່ໄດ້ຮັບການເຈີມຕັ້ງເປັນບາດຫຼວງ ເພິ່ນ “ອຸທິດຕົນເພື່ອຄົ້ນຫາຄວາມຈິງຂອງ ພຣະເຈົ້າດ້ວຍສິ້ນສຸດຫົວໃຈ.” ມີເພື່ອນນັກປະຕິຮູບກ່າວເຖິງສວິງລີວ່າ, “ເພາະເພິ່ນຮູ້ຊຶ້ງວ່າ ຄົນທີ່ໄດ້ຮັບ ມອບໝາຍໃຫ້ເບິ່ງແຍງຝູງແກະຂອງພຣະເຈົ້າຈະຕ້ອງມີຄວາມຮູ້ພຽງໃດ.”[1] ເພິ່ນຍິ່ງຄົ້ນຄວ້າພຣະຄຳພີກໍ ຍິ່ງເຫັນຢ່າງແຈ່ມແຈ້ງເຖິງຄວາມແຕກຕ່າງລະຫວ່າງຄວາມຈິງຂອງພຣະຄຳພີ ແລະ ຄວາມເທັດຂອງ ຄຣິສຕະຈັກໂຣມ. ເພິ່ນຈຶ່ງຍອມຮັບພຣະຄຳພີໃນຖານະພຣະຄຳຂອງພຣະເຈົ້າ ເປັນມາດຕະຖານດຽວທີ່ ພຽງພໍ ແລະ ບໍ່ຜິດພາດ. ສວິງລີເຫັນວ່າຈະຕ້ອງໃຫ້ພຣະຄຳພີຕີຄວາມໝາຍຂອງພຣະຄຳພີເອງ, ຈຶ່ງ ບໍ່ກ້າອະທິບາຍພຣະຄຳພີເພື່ອສະໜັບສະໜູນທິດສະດີ ຫຼື ຄຳສອນທີ່ເຊື່ອຢູ່ແລ້ວ ແຕ່ຖືວ່າຕົນມີໜ້າທີ່ ສຶກສາຮຽນຮູ້ເຖິງຄຳສອນທີ່ກົງໄປກົງມາ ແລະ ແຈ່ມແຈ້ງຂອງພຣະຄຳພີ. ເພິ່ນພະຍາຍາມໃຊ້ທຸກສິ່ງທີ່ ມີປະໂຫຍດໃນການເຂົ້າໃຈຄວາມໝາຍຂອງພຣະຄຳພີຢ່າງຖືກຕ້ອງ ແລະ ຄົບຖ້ວນ, ພ້ອມທັງທູນຂໍໃຫ້ ພຣະວິນຍານບໍຣິສຸດຊົງຊ່ວຍ, ເພາະເພິ່ນກ່າວວ່າ ພຣະວິນຍານຈະຊົງເປີດເຜີຍຄວາມໝາຍໃຫ້ທຸກຄົນ ທີ່ສະແຫວງຫາດ້ວຍຄວາມຈິງໃຈ ແລະ ການອະທິຖານ. *{GC 173.2}*

ສວິງລີກ່າວວ່າ: “ພຣະຄຳພີມາຈາກພຣະເຈົ້າບໍ່ແມ່ນມາຈາກມະນຸດ ແລະ ພຣະເຈົ້າຜູ້ຊົງໃຫ້ ຄວາມກະຈ່າງນັ້ນ ຈະຊ່ວຍໃຫ້ທ່ານເຂົ້າໃຈວ່າຖ້ອຍຄຳໃນພຣະຄຳພີມາຈາກພຣະອົງ. ພຣະຄຳຂອງ ພຣະເຈົ້າ . . . ບໍ່ສາມາດລົ້ມເຫຼວ, ພຣະຄຳນັ້ນສະຫວ່າງສະໄຫວ, ທັງອະທິບາຍ ແລະ ເປີດເຜີຍຕົວ ມັນເອງ ແລະ ສ່ອງສະຫວ່າງເຂົ້າໄປໃນຈິດໃຈເພື່ອໃຫ້ຮູ້ເລື່ອງແຫ່ງພຣະຄຸນ ແລະ ຄວາມລອດພົ້ນທີ່ ສົມບູນ; ພຣະຄຳພີເລົ້າໂລມຈິດໃຈຂອງຜູ້ຄົນໃນພຣະເຈົ້າ, ຊ່ວຍຄົນໃຫ້ຖ່ອມໃຈລົງເພື່ອຈະລືມຕົວເອງ ເຖິງ ຂັ້ນສະຫຼະຕົວເອງໄດ້ ແລະ ຮັບເອົາພຣະເຈົ້າ.” ສວິງລີໄດ້ພິສູດເຖິງຄວາມຈິງຂອງຖ້ອຍຄຳເຫຼົ່ານີ້ໃນຊີວິດ ຂອງເພິ່ນເອງ. ຕໍ່ມາເພິ່ນຂຽນເຖິງປະສົບການຂອງຕົນໃນເວລານັ້ນວ່າ: “ເມື່ອ . . . ຂ້າພະເຈົ້າເລີ່ມທຸ້ມເທກັບ ການສຶກສາພຣະຄຳພີຢ່າງສຸດໃຈນັ້ນ ກໍຈະມີຂໍ້ຄັດຄ້ານຈາກຫຼັກປັດຊະຍາ ແລະ ວິຊາສາສະໜາສາດ ຢູ່ເລື້ອຍ ໆ. ໃນທີ່ສຸດຂ້າພະເຈົ້າຈຶ່ງເວົ້າກັບຕົວເອງວ່າ, ‘ເຈົ້າຕ້ອງປະຖິ້ມສິ່ງເຫຼົ່ານັ້ນທັງໝົດ ແລະ ຮຽນຮູ້ ເຖິງຄວາມໝາຍຂອງພຣະເຈົ້າຈາກພຣະຄຳອັນລຽບງ່າຍຂອງພຣະອົງຢ່າງດຽວ.’ ຈາກນັ້ນຂ້າພະເຈົ້າກໍ ເລີ່ມທູນຂໍໃຫ້ພຣະເຈົ້າຊົງໃຫ້ຄວາມກະຈ່າງ ແລະ ຕັ້ງແຕ່ນັ້ນມາຂ້າພະເຈົ້າເລີ່ມເຂົ້າໃຈພຣະຄຳພີງ່າຍ ຂຶ້ນ.”[2] *{GC 174.1}*

ສວິງລີປະກາດເລື່ອງຄວາມລອດພົ້ນ

ຄຳສອນທີ່ສວິງລີປະກາດນັ້ນບໍ່ໄດ້ຮັບຈາກລູເທີ, ແຕ່ເປັນຄຳສອນຂອງພຣະຄຣິສ. ເພິ່ນກ່າວ ວ່າ: “ຖ້າລູເທີປະກາດພຣະຄຣິສ ເພິ່ນກໍເຮັດໃນສິ່ງທີ່ຂ້າພະເຈົ້າກຳລັງເຮັດຢູ່ນີ້ແຫຼະ. ຄົນທີ່ເພິ່ນ ນຳມາຫາພຣະຄຣິສມີຫຼາຍກວ່າທີ່ຂ້າພະເຈົ້ານຳມາ ແຕ່ເລື່ອງນີ້ບໍ່ສຳຄັນ. ຂ້າພະເຈົ້າເປັນທະຫານ ຂອງພຣະຄຣິສ, ພຣະອົງເປັນເຈົ້ານາຍຜູ້ດຽວຂອງຂ້າພະເຈົ້າ ແລະ ຂ້າພະເຈົ້າຈະບໍ່ເຊີດຊູນາມຊື່ອື່ນ ໃດນອກຈາກພຣະອົງ. ຂ້າພະເຈົ້າບໍ່ເຄີຍຂຽນຫາລູເທີແມ່ນແຕ່ຄຳດຽວ ແລະ ລູເທີກໍບໍ່ເຄີຍຂຽນຫາ ຂ້າພະເຈົ້າ. ເປັນຫຍັງຈຶ່ງເປັນຢ່າງນັ້ນ? . . . ກໍເພື່ອພິສູດວ່າ ພຣະວິນຍານຂອງພຣະເຈົ້າເປັນອັນໜຶ່ງອັນ ດຽວກັນກັບພຣະອົງເອງຢ່າງແທ້ຈິງ, ເນື່ອງຈາກເຮົາທັງສອງສອນເລື່ອງຂອງພຣະຄຣິສໃນລັກສະນະທີ່ ເໝືອນກັນ ໂດຍບໍ່ໄດ້ວາງແຜນກັນມາກ່ອນ.”[3] *{GC 174.2}*

---

[1] ໄວລີ (Wylie), ເຫຼັ້ມ 8, ບົດ 5.

[2] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 8, ບົດ 6.

[3] ໂດບິນເຍ (D’Aubigné), ເຫຼັ້ມ 8, ບົດ 9.

ໃນປີ 1516 ສວິງລີໄດ້ຮັບເຊີນໃຫ້ເປັນນັກເທດປະຈຳຢູ່ສຳນັກນັກບວດທີ່ເມືອງໄອຊີເດັນ (Einsiedeln). ໃນສະຖານທີ່ແຫ່ງນີ້ ເພິ່ນມີໂອກາດເຫັນຄວາມເສື່ອມເສຍຂອງຄຣິສຕະຈັກໂຣມຢ່າງໃກ້ຊິດ ແລະ ເປັນ ບ່ອນທີ່ເພິ່ນເຮັດວຽກໃນຖານະນັກປະຕິຮູບທີ່ແຜ່ອິດທິພົນອອກໄປໄກພົ້ນສາຍພູອານເປ ອັນເປັນບ້ານ ເກີດຂອງເພິ່ນ. ມີຮູບປັ້ນຂອງນາງມາຣີ ເປັນໜຶ່ງໃນສິ່ງທີ່ດຶງດູດຜູ້ຄົນຫຼາຍທີ່ສຸດຂອງເມືອງໄອຊີເດັນ, ເຊິ່ງ ມີການເລົ່າລືກັນວ່າຮູບປັ້ນດັ່ງກ່າວສາມາດເຮັດການອັດສະຈັນໄດ້. ມີຂໍ້ຄວາມຂຽນໄວ້ເໜືອປະຕູກຳແພງ ຂອງສຳນັກນັກບວດນັ້ນວ່າ, “ຜູ້ທີ່ເຂົ້າມາໃນນີ້ສາມາດຮັບການຍົກບາບທັງສິ້ນ.”[4] ມີຜູ້ສະແຫວງບຸນ ເດີນທາງມາໄຫວ້ບູຊາຮູບປັ້ນນາງມາຣີຢູ່ຕະຫຼອດປີ ແຕ່ໃນເທດສະການປະຈຳປີມີຄົນຫຼວງຫຼາຍມາຈາກ ທຸກພາກຂອງສວິສເຊີແລນ, ຈາກປະເທດຝຣັ່ງ ແລະ ເຢຍລະມັນ. ສວິງລີເຫັນແລ້ວຈຶ່ງຮູ້ສຶກເສົ້າ ແຕ່ກໍ ຖືເປັນໂອກາດທີ່ຈະປະກາດແກ່ຜູ້ທີ່ເປັນທາດຂອງຄວາມງົມງວາຍເຫຼົ່ານີ້ວ່າ ຂ່າວປະເສີດຊ່ວຍປົດປ່ອຍ ພວກເຂົາໄດ້. *{GC 174.3}*

ເພິ່ນກ່າວວ່າ: “ຢ່າໄດ້ຄິດເລີຍວ່າ ພຣະເຈົ້າສະຖິດຢູ່ໃນວິຫານນີ້ຫຼາຍກວ່າບ່ອນອື່ນທົ່ວໃຕ້ຟ້າທີ່ ພຣະອົງຊົງສ້າງ. ບໍ່ວ່າທ່ານຈະມາຈາກປະເທດໃດ ພຣະເຈົ້າສະຖິດຢູ່ທີ່ນັ້ນ ແລະ ຊົງຟັງທ່ານ. . . . ພວກ ທ່ານຄິດວ່າຈະໄດ້ພຣະຄຸນຂອງພຣະເຈົ້າຜ່ານເລື່ອງຕ່າງ ໆ ເຫຼົ່ານີ້ບໍ ເຊັ່ນ: ການເຮັດບຸນທີ່ບໍ່ກໍ່ໃຫ້ເກີດ ປະໂຫຍດ, ການເດີນທາງໄກເພື່ອສະແຫວງບຸນ, ການຖວາຍ, ການຂາບໄຫວ້ຮູບປັ້ນ ແລະ ການ ອະທິຖານຕໍ່ນາງມາຣີ ຫຼື ຕໍ່ພວກນັກບຸນ? . . . ການອະທິຖານຢ່າງຍາວນານຊ່ວຍໃຫ້ພຣະເຈົ້າຕອບຄຳ ອະທິຖານຂອງເຮົາຊັ້ນບໍ? ຜ້າຄຸມຫົວທີ່ສະທ້ອນແສງແວວວາວ, ການໂກນຫົວໃຫ້ກ້ຽງ, ຜ້າຄຸມຍາວ ທີ່ຄຸມທັງຕົວ ຫຼື ເກີບລາຍສີທອງມີປະໂຫຍດຫຍັງ? . . . ພຣະເຈົ້າຊົງເບິ່ງທີ່ຈິດໃຈ ແລະ ຈິດໃຈຂອງ ພວກເຮົາຫ່າງເຫີນຈາກພຣະອົງ.” “ພຣະຄຣິສຜູ້ສະຫຼະພຣະຊົນເທິງໄມ້ກາງແຂນຄັ້ງດຽວນັ້ນ ຊົງເປັນ ເຄື່ອງບູຊາໄຖ່ບາບ ທີ່ຊຳລະຄວາມຜິດບາບຂອງຜູ້ເຊື່ອໄປຕະຫຼອດການ.”[5] *{GC 175.1}*

ຜູ້ຟັງຫຼາຍຄົນບໍ່ຍອມເປີດໃຈຮັບເອົາຄຳສອນເຫຼົ່ານີ້ ເພາະຮູ້ສຶກຂົ່ມຂື່ນເມື່ອໄດ້ຍິນວ່າ ການເດີນທາງ ມາສະແຫວງບຸນດ້ວຍຄວາມຍາກລຳບາກນັ້ນບໍ່ມີປະໂຫຍດ. ພວກເຂົາບໍ່ສາມາດເຂົ້າໃຈເລື່ອງທີ່ພຣະຄຣິສ ຊົງອະໄພຄວາມບາບ ໂດຍທີ່ພວກເຂົາບໍ່ຕ້ອງເສຍຄ່າອັນໃດເລີຍ. ຄົນເຫຼົ່ານີ້ພໍໃຈກັບວິທີຂຶ້ນສະຫວັນແບບ ເກົ່າທີ່ຄຣິສຕະຈັກໂຣມເຄີຍສອນໄວ້ ແລະ ຮູ້ສຶກງຶດດ້ານທີ່ຈະສະແຫວງຫາສິ່ງທີ່ດີກວ່າ. ການໄວ້ວາງໃຈ ໃນພວກບາດຫຼວງ ແລະ ສັນຕະປາປາໃນເລື່ອງຄວາມລອດຂອງຕົນ ງ່າຍກວ່າທີ່ຈະສະແຫວງຫາຈິດໃຈ ທີ່ບໍຣິສຸດ. *{GC 175.2}*

ແຕ່ກໍມີກຸ່ມໜຶ່ງທີ່ມີຄວາມຊົ່ນຊື່ນຍິນດີ ທີ່ຈະຮັບເອົາຂ່າວປະເສີດເລື່ອງພຣະຄຣິສຊົງໄຖ່ບາບຂອງ ມະນຸດ. ຄົນເຫຼົ່ານີ້ຮູ້ສຶກວ່າ ພິທີກຳຂອງຄຣິສຕະຈັກໂຣມບໍ່ໄດ້ເຮັດໃຫ້ຈິດໃຈມີສັນຕິສຸກ, ພວກເຂົາ ຈຶ່ງເຊື່ອວາງໃຈໃນພຣະໂລຫິດຂອງພຣະຜູ້ຊ່ວຍໃຫ້ລອດ ເພື່ອຊຳລະຄວາມຜິດບາບຂອງຕົນ. ເມື່ອກັບ ໄປບ້ານແລ້ວ ຄົນເຫຼົ່ານີ້ກໍເປີດເຜີຍຄວາມຈິງອັນລ້ຳຄ່າທີ່ພວກເຂົາໄດ້ຮັບ; ສະນັ້ນ, ຫຼັກຄວາມຈິງ ຈຶ່ງຖືກນຳມາປະກາດຈາກບ້ານສູ່ບ້ານ ແລະ ຈາກເມືອງສູ່ເມືອງ, ສ່ວນຈຳນວນນັກສະແຫວງບຸນທີ່ ມານະມັດສະການທີ່ສານເຈົ້າຂອງນາງມາຣີນັ້ນກໍຫຼຸດລົງຫຼາຍ ແລະ ເງິນຖວາຍກໍຫຼຸດລົງດ້ວຍ; ເພາະ ເຫດນີ້, ເງິນເດືອນຂອງສວິງລີກໍຫຼຸດລົງ ເພາະມາຈາກເງິນຖວາຍນັ້ນເອງ. ຢ່າງໃດກໍຕາມ, ເພິ່ນມີແຕ່ ຄວາມຊື່ນຊົ່ມຍິນດີທີ່ເຫັນວ່າຄວາມຄັ່ງໄຄ້ ແລະ ຄວາມງົມງວາຍທີ່ຄອບງຳຈິດໃຈປະຊາຊົນນັ້ນກຳລັງ ໝົດອຳນາດລົງ. *{GC 175.3}*

---

[4] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 8, ບົດ 5.

[5] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 8, ບົດ 5.

ພວກຜູ້ນຳຄຣິສຕະຈັກໂຣມບໍ່ໄດ້ມີດບອດຕໍ່ວຽກງານທີ່ສວິງລີກຳລັງເຮັດຢູ່ ແຕ່ໃນຕອນນັ້ນພວກເຂົາຍັງຂົ່ມໃຈ ແລະ ບໍ່ເຂົ້າໄປຂັດຂວາງ, ເພາະຍັງຫວັງວ່າຈະສາມາດດຶງເພີ່ນມາເປັນຝ່າຍຂອງຕົນ, ພວກເຂົາຈຶ່ງຍົກຍໍປໍປັ້ນເພື່ອຊະນະໃຈເພີ່ນ. ຢ່າງໃດກໍດີ, ຫຼັກຄວາມຈິງກຳລັງເຂົ້າຍຶດຄອງຈິດໃຈຂອງປະຊາຊົນ. *{GC 176.1}*

ຍ້າຍໄປປະຈຳຢູ່ນະຄອນຊູຣິກ

ການເຮັດວຽກທີ່ເມືອງໄອຊີເດັນນັ້ນ ຊ່ວຍກຽມສວິງລີໃຫ້ພ້ອມທີ່ຈະເຮັດວຽກໃນພາກສະໜາມທີ່ກວ້າງຂຶ້ນອີກ ແລະ ໃນບໍ່ດົນເພີ່ນກໍຖືກຍ້າຍ. ຫຼັງຈາກຢູ່ທີ່ເມືອງໄອຊີເດັນສາມປີ ເພີ່ນຖືກຮຽກເອີ້ນໃຫ້ປະຈຳຕຳແໜ່ງນັກເທດທີ່ໂບດໃຫຍ່ແຫ່ງນະຄອນຊູຣິກ (Zurich) ເຊິ່ງເປັນເມືອງທີ່ສຳຄັນທີ່ສຸດຂອງສະຫະພັນລັດສວິສໃນຂະນະນັ້ນ ແລະ ການເຮັດວຽກທີ່ນັ້ນສົ່ງອິດທິພົນອອກໄປຢ່າງກວ້າງຂວາງ. ພວກຜູ້ນຳຄຣິສຕະຈັກທີ່ເຊີນສວິງລີໄປທີ່ນະຄອນຊູຣິກຕ້ອງການປິດປະຕູບໍ່ໃຫ້ມີການປະຕິຮູບ, ພວກເຂົາຈຶ່ງລະບຸຂອບເຂດຄວາມຮັບຜິດຊອບໃຫ້ເພີ່ນ. *{GC 176.2}*

ພວກເຂົາສັ່ງວ່າ: “ເຈົ້າຕ້ອງມີຄວາມຂະຫຍັນໝັ່ນພຽນໃນການເກັບເງິນເຂົ້າມາໃນໂບດແຫ່ງນີ້, ໂດຍບໍ່ໃຫ້ເບິ່ງຂ້າມແມ່ນແຕ່ໜ້ອຍດຽວ. ເຈົ້າຕ້ອງຕັກເຕືອນສະມາຊິກຜູ້ສັດຊື່ດ້ວຍການເທດສະໜາ ແລະ ໃນຕູ້ຮັບຟັງການສາລະພາບບາບ ເພື່ອໃຫ້ພວກເຂົາຖວາຍເງິນສິບລົດ ແລະ ຄ່າທຳນຽມຕ່າງ ໆໃຫ້ຄົບຖ້ວນ ແລະ ເພື່ອໃຫ້ພວກເຂົາສະແດງອອກເຖິງຄວາມຮັກທີ່ມີຕໍ່ຄຣິສຕະຈັກດ້ວຍການຖວາຍ. ເຈົ້າຕ້ອງຂະຫຍັນເອົາໃຈໃສ່ເພື່ອເພີ່ມລາຍຮັບຈາກຄົນປ່ວຍ, ຈາກຄົນທີ່ເຂົ້າພິທີສົມລະນຶກ ແລະ ຈາກພິທີອື່ນ ໆ ຂອງຄຣິສຕະຈັກ.” ພວກເຂົາສັ່ງເພີ່ມເຕີມວ່າ: “ສ່ວນການນຳໃນພິທີຕ່າງ ໆ, ການເທດສະໜາ ແລະ ການເບິ່ງແຍງສະມາຊິກນັ້ນ ກໍເປັນໜ້າທີ່ຂອງອາຈານປະຈຳໂບດດ້ວຍ, ແຕ່ເຈົ້າສາມາດຫາຄົນເຮັດແທນໄດ້ ໂດຍສະເພາະການເທດສະໜາ. ເຈົ້າຈະເຮັດພິທີໃຫ້ຄົນດ້ວຍຕົວເອງໄດ້ໃນເມື່ອຄົນນັ້ນເປັນບຸກຄົນສຳຄັນ ແລະ ສະເພາະໃນເວລາທີ່ມີຄົນຂໍ, ຫ້າມປະກອບພິທີສຸ່ມສີ່ສຸ່ມຫ້າໂດຍບໍ່ແບ່ງແຍກຊົນຊັ້ນຄົນ.”[6] *{GC 176.3}*

ສວິງລີຟັງການມອບວຽກຢ່າງງຽບ ໆ ແລ້ວຈຶ່ງໃຫ້ຄຳຕອບດ້ວຍການຂອບໃຈຄົນເຫຼົ່ານັ້ນທີ່ຮຽກເອີ້ນເພີ່ນສຳລັບຕຳແໜ່ງທີ່ສຳຄັນນີ້; ຈາກນັ້ນ, ຈຶ່ງອະທິບາຍແນວທາງທີ່ເພີ່ນຢາກໃຊ້ໃນການປະຕິບັດວຽກງານ ໂດຍກ່າວວ່າ: “ຊີວິດຂອງພຣະຄຣິສໄດ້ຖືກປົດບັງໄວ້ຈາກປະຊາຊົນດົນນານເກີນໄປ. ຂ້າພະເຈົ້າຈະເທດສະໜາຈາກພຣະທຳມັດທາຍທັງໝົດ . . . ໂດຍໃຊ້ແຕ່ພຣະຄຳພີເທົ່ານັ້ນ, ຈະເຈາະເຂົ້າໄປເຖິງສ່ວນເລິກຂອງຄວາມໝາຍ, ເອົາຂໍ້ພຣະຄຳພີຕອນໜຶ່ງໄປສົມທຽບກັບພຣະຄຳພີຕອນອື່ນ ແລະ ຈະສະແຫວງຫາຄວາມກະຈ່າງດ້ວຍການອະທິຖານຢ່າງຮ້ອນຮົນຢູ່ສະເໝີ. ຂ້າພະເຈົ້າຂໍອຸທິດການຮັບໃຊ້ເພື່ອຖວາຍກຽດແດ່ພຣະເຈົ້າ, ເພື່ອການສັນລະເສີນພຣະບຸດອົງດຽວຂອງພຣະອົງ, ເພື່ອຄວາມລອດພົ້ນຂອງຜູ້ຄົນ ແລະ ເພື່ອເສີມສ້າງຄວາມເຊື່ອຂອງພວກເຂົາຢ່າງແທ້ຈິງ.”[7] ເຖິງແມ່ນວ່າມີຜູ້ນຳຄຣິສຕະຈັກບາງຄົນບໍ່ເຫັນດ້ວຍກັບແຜນການນີ້ ແລະ ພະຍາຍາມໂນ້ມນ້າວໃຫ້ສວິງລີປ່ຽນໃຈກໍຕາມ, ແຕ່ເພີ່ນຍັງຢືນຢັນໝັ້ນຄົງ. ເພີ່ນປະກາດວ່າຈະບໍ່ນຳວິທີການໃໝ່ເຂົ້າມາ ແຕ່ຈະໃຊ້ວິທີເກົ່າແກ່ທີ່ຄຣິສຕະຈັກເຄີຍນຳໃຊ້ໃນສະໄໝກ່ອນ ເຊິ່ງເປັນສະໄໝທີ່ບໍຣິສຸດກວ່າ. *{GC 176.4}*

---

[6] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 8, ບົດ 6.
[7] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 8, ບົດ 6.

ເມື່ອເລີ່ມຕົ້ນກໍມີຄົນສົນໃຈໃນຫຼັກຄວາມຈິງທີ່ສວິງລີສອນ ແລະ ມີຄົນຈຳນວນຫຼວງຫຼາຍພາກັນມາຟັງເພີ່ນເທດສະໜາ. ມີຫຼາຍຄົນທີ່ເຄີຍເຊົາມາໂບດເປັນເວລາດົນກັບເຂົ້າມາຟັງເພີ່ນດ້ວຍ. ເພີ່ນເລີ່ມການປະກາດທີ່ນັ້ນດ້ວຍການເປີດອ່ານໜັງສືພຣະກິດຕິຄຸນສີ່ເຫຼັ້ມໃນພຣະຄຳພີໃໝ່ ແລະ ອະທິບາຍຄວາມໝາຍຂອງເລື່ອງທີ່ພຣະເຈົ້າຊົງດົນໃຈໃຫ້ມີການບັນທຶກໄວ້ໃນນັ້ນ ໃຫ້ຄົນຟັງເຖິງຊີວິດ, ຄຳສອນ ແລະ ການສິ້ນພຣະຊົນຂອງພຣະຄຣິສ. ເພີ່ນໃຊ້ວິທີການດຽວກັນທີ່ໃຊ້ໃນເມືອງໄອຊີເດັນ ຄືການສອນຄົນທັງຫຼາຍວ່າ ພຣະຄຳຂອງພຣະເຈົ້າເປັນມາດຕະຖານດຽວໃນຊີວິດທີ່ບໍ່ຜິດພາດ ແລະ ການສິ້ນພຣະຊົນຂອງພຣະຄຣິສເປັນເຄື່ອງໄຖ່ບາບອັນດຽວທີ່ຄົບຖ້ວນບໍຣິບູນ. ສວິງລີກ່າວວ່າ: “ຂ້າພະເຈົ້າປາຖະໜານຳພວກທ່ານມາເຖິງພຣະຄຣິສ, ພຣະອົງຊົງເປັນແຫຼ່ງຄວາມລອດພົ້ນອັນແທ້ຈິງ.”[8] ມີຄົນຈາກທຸກລະດັບຊົນຊັ້ນມາອ້ອມລ້ອມຟັງເພີ່ນ ຕັ້ງແຕ່ລະດັບລັດຖະບຸລຸດ, ຕະຫຼອດຈົນເຖິງພວກນັກວິຊາການ, ຊ່າງຝີມື ແລະ ຊາວໄຮ່ຊາວນາ, ຕ່າງຄົນຕ່າງຟັງຖ້ອຍຄຳຂອງເພີ່ນດ້ວຍໃຈຈົດຈໍ່. ເພີ່ນບໍ່ພຽງແຕ່ປະກາດເຖິງຄວາມລອດພົ້ນທີ່ພຣະເຈົ້າປະທານໃຫ້ໂດຍບໍ່ຄິດມູນຄ່າເທົ່ານັ້ນ, ແຕ່ຍັງປະນາມຄວາມຊົ່ວຮ້າຍຕ່າງ ໆໃນສະໄໝນັ້ນໂດຍບໍ່ຫວັ່ນໄຫວ. ຫຼາຍຄົນສັນລະເສີນພຣະເຈົ້າໃນຂະນະທີ່ເດີນທາງກັບຈາກໂບດ ແລະ ກ່າວວ່າ: “ຊາຍຜູ້ນີ້ເປັນນັກເທດສະໜາເລື່ອງຫຼັກຄວາມຈິງ. ເພິ່ນຈະເປັນໂມເຊຂອງພວກເຮົາທີ່ຈະນຳພວກເຮົາອອກຈາກຄວາມມືດມິດແຫ່ງເອຢິບນີ້.”[9] *{GC 177.1}*

ເຖິງແມ່ນວ່າເບື້ອງຕົ້ນມີຄົນຕອບຮັບຕໍ່ການເຮັດວຽກຂອງເພີ່ນດ້ວຍຄວາມຕື່ນເຕັ້ນດີໃຈ, ແຕ່ເມື່ອເວລາຜ່ານໄປໄລຍະໜຶ່ງ ກໍມີຄົນເລີ່ມຕໍ່ຕ້ານ. ພວກນັກບວດຕັ້ງໜ້າຂັດຂວາງການປະກາດຂອງເພີ່ນ ແລະ ປະນາມຕິຕຽນຄຳສອນຂອງເພີ່ນ. ມີຫຼາຍຄົນເວົ້າເຍາะເຍີ້ຍສຽດສີ, ສ່ວນຄົນອື່ນກໍດູຖູກ ແລະ ຂົ່ມຂູ່; ແຕ່ສວິງລີຮັບມືກັບສິ່ງເຫຼົ່ານີ້ດ້ວຍຄວາມອົດທົນ ແລະ ກ່າວວ່າ: “ຖ້າພວກເຮົາປາຖະໜາທີ່ຈະຊະນະໃຈຄົນຊົ່ວເພື່ອນຳມາຢູ່ຝ່າຍພຣະຄຣິສ ກໍມີຫຼາຍເລື່ອງທີ່ພວກເຮົາຈະຕ້ອງບໍ່ຖືສາ.”[10] *{GC 177.2}*

ໃນຊ່ວງເວລານັ້ນ ມີວິທີການໃໝ່ເຂົ້າມາສົ່ງເສີມພັນທະກິດຂອງການປະຕິຮູບ. ມີຜູ້ສະໜັບສະໜູນຂະບວນການປະຕິຮູບຄົນໜຶ່ງຈາກເມືອງບາເຊັນ (Basel) ສົ່ງທ້າວ ລູຊຽນ (Lucian) ມາທີ່ນະຄອນຊູຣິກພ້ອມດ້ວຍໜັງສືບາງເຫຼັ້ມຂອງລູເທີ ໂດຍແນະນຳວ່າ ການຂາຍໜັງສືເຫຼົ່ານີ້ອາດເປັນວິທີໜຶ່ງທີ່ຈະກະຈາຍແສງສະຫວ່າງທີ່ໄດ້ຜົນ. ຄົນນັ້ນໄດ້ຂຽນເຖິງສວິງລີວ່າ: “ລອງສຳຫຼວດເບິ່ງດູວ່າ [ທ້າວ ລູຊຽນ] ເປັນຄົນຮອບຄອບ ແລະ ມີຄວາມສາມາດພຽງພໍຫຼືບໍ່. ຖ້າມີກໍໃຫ້ລາວນຳໜັງສືຂອງລູເທີໄປທ່ານກາງຊາວສວິສ ຈາກນະຄອນໜຶ່ງໄປສູ່ນະຄອນອື່ນ, ຈາກເມືອງໜຶ່ງໄປສູ່ເມືອງອື່ນ, ຈາກບ້ານນີ້ໄປບ້ານນັ້ນ ແລະ ແມ່ນແຕ່ໄປຕາມເຮືອນຊານຂອງປະຊາຊົນ, ໂດຍສະເພາະຢ່າງຍິ່ງ ໜັງສືທີ່ອະທິບາຍຄຳອະທິຖານຂອງພຣະເຢຊູ ເຊິ່ງຂຽນໃຫ້ສະມາຊິກທົ່ວໄປ. ຍິ່ງມີຄົນຮູ້ຈັກໜັງສືເຫຼົ່ານີ້ ກໍຈະຍິ່ງມີຄົນຊື້.”[11] ດ້ວຍເຫດນີ້, ແສງແຫ່ງຄວາມຈິງຈຶ່ງສ່ອງເຂົ້າໄປໃນສວິສເຊີແລນ. *{GC 178.1}*

ໃບລ້ຳງບາບ

ໃນເວລາທີ່ພຣະເຈົ້າກຳລັງກຽມທີ່ຈະຫັກສາຍໂສ້ແຫ່ງຄວາມງົມງວາຍ ແລະ ການຂາດຄວາມຮູ້ນັ້ນ ເປັນເວລາທີ່ຊາຕານໃຊ້ພະລັງອຳນາດຫຼາຍທີ່ສຸດ ເພື່ອໃຫ້ຄວາມມືດປົກຄຸມຜູ້ຄົນ ແລະ ເພື່ອ

[8] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 8, ບົດ 6.
[9] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 8, ບົດ 6.
[10] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 8, ບົດ 6.
[11] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 8, ບົດ 6.

ມັດສາຍໂສ້ໃຫ້ແໜ້ນເຂົ້າໄປອີກ. ໃນຂະນະທີ່ມີຊາຍຫຼາຍຄົນໃນດິນແດນຕ່າງ ໆ ລຸກຂຶ້ນປະກາດໃຫ້ປະຊາຊົນຮູ້ວ່າ ມະນຸດສາມາດຮັບການອະໄພບາບ ແລະ ເປັນຄົນຊອບທຳໄດ້ໂດຍຜ່ານພຣະໂລຫິດຂອງພຣະຄຣິສ, ຄຣິສຕະຈັກໂຣມກໍມີຄວາມກະຕືລືລົ້ນທີ່ຈະເຮັດການຄ້າຂາຍທົ່ວທຸກປະເທດທີ່ນັບຖືສາສະໜາຄຣິສ ໃຫ້ຄົນຊື້ການອະໄພບາບດ້ວຍເງິນ. {GC 178.2}

ບາບທຸກຢ່າງກໍມີລາຄາຂອງມັນ ແລະ ຕາບໃດທີ່ຄັງເງິນຂອງຄຣິສຕະຈັກເຕັມ ຄົນທັງຫຼາຍສາມາດເຮັດຜິດເຮັດຊົ່ວໄດ້ຢ່າງອິດສະຫຼະ. ສະນັ້ນ, ທັງສອງຝ່າຍຈຶ່ງເຄື່ອນໄຫວຂະຫຍັບຂະຫຍາຍຕໍ່ໄປ, ຝ່າຍໜຶ່ງສະເໜີການໃຫ້ອະໄພດ້ວຍການແລກເງິນ, ອີກຝ່າຍໜຶ່ງສອນວ່າການໃຫ້ອະໄພນັ້ນມາຈາກພຣະຄຣິສ; ຝ່າຍຄຣິສຕະຈັກໂຣມອະນຸຍາດໃຫ້ເຮັດບາບ ແລະ ໃຊ້ບາບເປັນເຄື່ອງມືຫາເງິນ, ສ່ວນຝ່າຍພວກນັກປະຕິຮູບນັ້ນປະນາມຄວາມບາບ ແລະ ປະກາດວ່າພຣະຄຣິສຊົງເປັນພຣະຜູ້ໄຖ່ ແລະ ພຣະຜູ້ຊ່ວຍໃຫ້ລອດ. {GC 178.3}

ໃນເຢຍລະມັນການຂາຍໃບລ້າງບາບຖືກມອບໄວ້ໃຫ້ພວກນັກບວດຄະນະໂດມິນນິກັນຮັບຜິດຊອບໂດຍມີ ທ້າວ ເທັດເຊັນ (Tetzel) ຜູ້ມີຊື່ສຽງບໍ່ດີນັ້ນເປັນຜູ້ດຳເນີນການ. ສ່ວນໃນສວິສເຊີແລນ ໃບລ້າງບາບນັ້ນຖືກມອບໄວ້ໃນມືພວກນັກບວດຄະນະຟຣັນຊິສກັນ ໂດຍມີ ທ້າວ ແຊມຊັນ (Samson) ຜູ້ເປັນນັກບວດຊາວອີຕາລີດຳເນີນການ. ກ່ອນໜ້ານີ້ແຊມຊັນໄດ້ຮັບໃຊ້ຄຣິສຕະຈັກໂຣມ ແລະ ໄດ້ສ້າງຜົນງານດີເດັ່ນດ້ວຍການນຳເງິນມະຫາສານຈາກເຢຍລະມັນ ແລະ ຈາກສວິສເຊີແລນເຂົ້າຄັງເງິນຂອງສັນຕະປາປາ. ບັດນີ້, ລາວເດີນທາງທົ່ວສວິສເຊີແລນ ໂດຍມີຝູງຊົນຫຼວງຫຼາຍອອກມາຟັງລາວ, ລາວໄດ້ຫຼອກເອົາລາຍຮັບອັນໜ້ອຍດຸ່ງວຂອງປະຊາຊົນຜູ້ຍາກຈົນ ແລະ ຮຽກຮ້ອງເງິນບໍລິຈາກຈຳນວນຫຼາຍຈາກຄົນຮັ່ງມີ. ເຖິງແມ່ນວ່າອິດທິພົນຂອງການປະຕິຮູບບໍ່ສາມາດຢຸດຢັ້ງການຂາຍໃບລ້າງບາບ, ແຕ່ມັນກໍຊ່ວຍບັນເທົາໄດ້ໃນລະດັບໜຶ່ງ. ສວິງລີຍັງຢູ່ເມືອງໄອຊີເດັນເມື່ອແຊມຊັນເຂົ້າມາໃນສວິສເຊີແລນ ແລະ ເລີ່ມຂາຍໃບລ້າງບາບໃນເມືອງທີ່ໃກ້ຄຽງ. ທັນທີທີ່ຮັບຂ່າວເລື່ອງພັນທະກິດຂອງແຊມຊັນ ສວິງລີຕັ້ງໜ້າຕັ້ງຕາຕໍ່ຕ້ານລາວ. ທັງສອງຄົນບໍ່ໄດ້ພົບກັນ ແຕ່ສວິງລີສາມາດເປີດໂປງການຫຼອກລວງຂອງນັກບວດຜູ້ນີ້ໄດ້ ຈົນລາວຈຳເປັນຕ້ອງຍ້າຍໄປບ່ອນອື່ນ. {GC 178.4}

ທີ່ນະຄອນຊູຣິກ, ສວິງລີເທດສະໜາຕໍ່ຕ້ານພວກຂາຍໃບລ້າງບາບຢ່າງກະຕືລືລົ້ນ; ແລະ ເມື່ອແຊມຊັນເດີນທາງມາໃກ້, ມີຜູ້ນຳຂ່າວອອກໄປບອກລາວວ່າ ສະພານະຄອນຊູຣິກຢາກໃຫ້ລາວເດີນທາງຕໍ່. ໃນທີ່ສຸດລາວໃຊ້ແຜນອຸບາຍເພື່ອເຂົ້ານະຄອນໄດ້ສຳເລັດ ແຕ່ຖືກໄລ່ອອກໄປໂດຍບໍ່ສາມາດຂາຍໃບລ້າງບາບແມ່ນແຕ່ໃບດຽວ; ຫຼັງຈາກນັ້ນບໍ່ດົນ ລາວກໍເດີນທາງອອກຈາກສວິສເຊີແລນ. {GC 179.1}

ມີເຫດການເກີດຂຶ້ນໃນປີ 1519 ທີ່ສ້າງແຮງສະໜັບສະໜູນໃຫ້ຂະບວນການປະຕິຮູບ ຄືການລະບາດຄັ້ງໃຫຍ່ຂອງການລະໂຣກ[12] ທີ່ນັກປະຫວັດສາດເອີ້ນວ່າ “ມະຫາມໍຣະນະໄພ” (The Great Death) ທີ່ລະບາດໃນສວິສເຊີແລນໃນປີນັ້ນ. ໃນຂະນະທີ່ຄົນທັງຫຼາຍຕ້ອງປະເຊີນໜ້າກັບຄວາມຕາຍເຊັ່ນນີ້ ມີຫຼາຍຄົນກັບຮູ້ສຶກວ່າໃບລ້າງບາບທີ່ຕົນຊື້ໄປນັ້ນບໍ່ມີຄ່າ ແລະ ບໍ່ມີປະໂຫຍດຫຍັງເລີຍ. ພວກເຂົາປາຖະໜາຮາກຖານແຫ່ງຄວາມເຊື່ອທີ່ໝັ້ນຄົງແຂງແກ່ນກວ່ານີ້. ສວິງລີຕິດໂຣກລະບາດທີ່ນະຄອນຊູຣິກ ໂດຍມີອາການໜັກຫຼາຍ ຈົນບໍ່ມີຄວາມຫວັງວ່າຈະສາມາດຫາຍໄດ້ ແລະ ມີຄົນປ່າວປະກາດຢ່າງກວ້າງຂວາງວ່າ ເພິ່ນໄດ້ເສຍຊີວິດແລ້ວ. ແຕ່ຄວາມກ້າຫານ ແລະ ຄວາມຫວັງຂອງເພິ່ນບໍ່ຫວັ່ນໄຫວໃນເວລາທີ່ທົດສອບຄວາມເຊື່ອນັ້ນ. ເພິ່ນຈັບຈ້ອງໄປທີ່ໄມ້ກາງແຂນແຫ່ງຄານວາຣີດ້ວຍຄວາມເຊື່ອ ແລະ ໄວ້ວາງໃຈໃນການໄຖ່ບາບທີ່ຄົບຖ້ວນບໍຣິບູນຂອງພຣະອົງ. ເມື່ອເພິ່ນຟື້ນກັບຄືນມາຈາກສະພາບໃກ້ຕາຍ ເພິ່ນເທດສະໜາປະກາດຂ່າວປະເສີດດ້ວຍຄວາມຮ້ອນຮົນຍິ່ງກວ່າເກົ່າ ແລະ ຖ້ອຍຄຳຂອງເພິ່ນມີພະລັງ

[12] plague, ພາສາໄທຊຽນວ່າ **กาฬโรค**.

ຢ່າງທີ່ບໍ່ເຄີຍມີມາກ່ອນ. ປະຊາຊົນຕ້ອນຮັບອາຈານທີ່ຮັກແພງກັບມາຈາກຂອບໜຸມຝັ່ງສົບດ້ວຍຄວາມຊົມຊື່ນຍິນດີ. ພວກເຂົາເອງກໍມາຈາກການເຝົ້າຄົນປ່ວຍ ແລະ ການເບິ່ງແຍງຄົນໃກ້ຕາຍ ຈຶ່ງຮູ້ສຶກເຖິງຄຸນຄ່າຂອງຂ່າວປະເສີດຢ່າງທີ່ບໍ່ເຄີຍຮູ້ສຶກມາກ່ອນ. {GC 179.2}

ບັດນີ້ສວິງລີເຂົ້າໃຈຫຼັກຄວາມຈິງແຫ່ງຂ່າວປະເສີດຢ່າງແຈ່ມແຈ້ງຂຶ້ນ ແລະ ໄດ້ປະສົບການເຖິງພະລັງຟື້ນຟູຂອງຂ່າວປະເສີດຫຼາຍຂຶ້ນດ້ວຍ. ເພິ່ນໃສ່ໃຈໃນເລື່ອງທີ່ມະນຸດຕົກສູ່ຄວາມບາບ ແລະ ແຜນການໄຖ່ມະນຸດໃຫ້ລອດ. ເພິ່ນກ່າວວ່າ: “ໃນອາດາມນັ້ນເຮົາທຸກຄົນມີສະພາບທີ່ຕາຍແລ້ວ ແລະ ເສື່ອມລົງພາຍໃຕ້ຄຳຕັດສິນລົງໂທດ.”[13] “ພຣະຄຣິສ . . . ຊົງໄຖ່ພວກເຮົາຄືນມາ, ເປັນການໄຖ່ທີ່ບໍ່ມີວັນໝົດສິ້ນ . . . ໂດຍຄວາມທຸກທໍລະມານຂອງພຣະອົງນັ້ນ . . . ພຣະອົງຈຶ່ງເປັນເຄື່ອງບູຊາໄຖ່ບາບຕະຫຼອດການ ແລະ ມີພະລັງໃນການຮັກສາຄົນໃຫ້ຫາຍຕະຫຼອດໄປເປັນນິດ. ເຄື່ອງບູຊານັ້ນຕອບສະໜອງຂໍ້ຮຽກຮ້ອງແຫ່ງຄວາມຍຸຕິທຳຂອງພຣະເຈົ້າຢ່າງຄົບຖ້ວນຕະຫຼອດນິຣັນ ສຳລັບທຸກຄົນທີ່ໄວ້ວາງໃຈໃນເຄື່ອງບູຊານັ້ນຢ່າງໝັ້ນຄົງບໍ່ຫວັ່ນໄຫວ.” ແຕ່ໃນຂະນະດຽວກັນສວິງລີສອນຢ່າງແຈ່ມແຈ້ງວ່າ ມະນຸດບໍ່ສາມາດອ້າງພຣະຄຸນຂອງພຣະຄຣິສເພື່ອເຮັດບາບຕໍ່ໄປຢ່າງເສລີ. “ພຣະເຈົ້າສະຖິດຢູ່ໃນທຸກສະຖານທີ່ທີ່ມີຄົນເຊື່ອໃນພຣະອົງ ແລະ ຖ້າພຣະອົງສະຖິດຢູ່ສະຖານທີ່ແຫ່ງໃດ ຄົນທີ່ນັ້ນຈະມີຄວາມກະຕືລືລົ້ນໃນການປະພຶດດີ.”[14] {GC 180.1}

ມີຄົນສົນໃຈມາຟັງການເທດສະໜາຂອງສວິງລີຈົນລົ້ນໂບດ. ເພິ່ນເປີດເຜີຍຫຼັກຄວາມຈິງເທື່ອລະໜ້ອຍຕາມທີ່ຜູ້ຟັງສາມາດຮັບໄດ້. ເພິ່ນລະວັງທີ່ຈະບໍ່ເລີ່ມຕົ້ນດ້ວຍປະເດັນທີ່ຈະເຮັດໃຫ້ຜູ້ຟັງຕົກໃຈ ແລະ ມີອະຄະຕິ. ວຽກງານຂອງເພິ່ນແມ່ນການຊັກຈູງຄົນໃຫ້ມາໃສ່ໃຈໃນຄຳສອນຂອງພຣະຄຣິສ ແລະ ຄິດເຖິງແບບຢ່າງຂອງພຣະອົງຢູ່ສະເໝີ; ດ້ວຍວ່າ ຄວາມຮັກຂອງພຣະອົງນັ້ນ ຈະຊ່ວຍພວກເຂົາໃຫ້ມີຄວາມອ່ອນໂຍນກວ່າເດີມ. ເມື່ອພວກເຂົາຮັບເອົາຫຼັກການຕ່າງ ໆ ແຫ່ງຂ່າວປະເສີດ, ຄວາມເຊື່ອ ແລະ ການກະທຳທີ່ງົມງວາຍກໍຈະຄ່ອຍ ໆ ໝົດໄປໃນທີ່ສຸດຢ່າງແນ່ນອນ. {GC 180.2}

ຂະບວນການປະຕິຮູບໄດ້ຂະຫຍາຍໄປເທື່ອລະກ້າວຕາມລຳດັບໃນນະຄອນຊູຣິກ ຈົນຝ່າຍສັດຕູຕົກໃຈແລ້ວຕື່ນຂຶ້ນມາຕໍ່ຕ້ານຢ່າງແຂງຂັນ. ກ່ອນໜ້ານັ້ນໜຶ່ງປີ, ລູເທີ ນັກບວດແຫ່ງເມືອງວິດເທັນເບີກ ໄດ້ກ່າວປະຕິເສດຄຳສັ່ງຂອງສັນຕະປາປາ ແລະ ຂອງຈັກກະພັດຢູ່ເມືອງເວີມ; ບັດນີ້, ທຸກຢ່າງເບິ່ງຄືວ່າຈະມີການຢືນຢັດຕໍ່ສູ້ການປະກາດອ້າງອຳນາດຂອງສັນຕະປາປາຢູ່ນະຄອນຊູຣິກໃນລັກສະນະທີ່ຄ້າຍຄືກັນ. ມີການໂຈມຕີສວິງລີຢ່າງຕໍ່ເນື່ອງ. ໃນເມືອງທີ່ປົກຄອງຕາມລະບອບສັນຕະປາປາ ດົນ ໆ ເທື່ອໜຶ່ງຈະມີການປະຫານຊີວິດພວກສາວົກຂອງຂ່າວປະເສີດດ້ວຍການເຜົາໄຟ, ແຕ່ພວກເຂົາຮູ້ສຶກວ່າຍັງບໍ່ພໍໃຈ, ຈະຕ້ອງປິດປາກອາຈານຜູ້ເຜີຍແຜ່ຄຳສອນນອກຮີດໃຫ້ໄດ້. ສະນັ້ນ, ເຈົ້າຄະນະແຫ່ງເມືອງຄອນສະຕັນຈຶ່ງສົ່ງຜູ້ແທນສາມຄົນໄປທີ່ສະພານະຄອນຊູຣິກ ດ້ວຍຂໍ້ກ່າວຫາວ່າສວິງລີສອນປະຊາຊົນໃຫ້ລະເມີດກົດຂອງຄຣິສຕະຈັກ, ເຊິ່ງເປັນການກະທົບຕໍ່ຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຂອງສັງຄົມ. ຜູ້ທີ່ຟ້ອງນັ້ນຍັງກ່າວວ່າ ຖ້າຫາກວ່າປະຊາຊົນເຊົານັບຖືອຳນາດຂອງຄຣິສຕະຈັກແລ້ວ ກໍຈະເກີດຄວາມສັບສົນວຸ້ນວາຍໃນທຸກແຫ່ງຕາມມາ. ສ່ວນສວິງລີກໍຕອບກັບວ່າ ເພິ່ນໄດ້ສອນຂ່າວປະເສີດໃນນະຄອນຊູຣິກມາແລ້ວສີ່ປີ ແລະ ນະຄອນນີ້ “ມີຄວາມສະຫງົບສຸກກວ່າເມືອງອື່ນໃດຂອງສະຫະພັນ [ສວິສ].” “ຖ້າຢ່າງນັ້ນ ຄຳສອນຄຣິສຕຽນແມ່ນສິ່ງທີ່ຮັກສາຄວາມສະຫງົບສຸກທີ່ດີທີ່ສຸດບໍ່ແມ່ນບໍ?”[15] {GC 180.3}

[13] ໄວລີ, ເຫຼັ້ມ 8, ບົດ 9.
[14] ໂດບິນເຍ, ເຫຼັ້ມ 8, ບົດ 9.
[15] ໄວລີ, ເຫຼັ້ມ 8, ບົດ 11.

ພວກຜູ້ແທນຂອງເຈົ້າຄະນະເຕືອນສະມາຊິກສະພາໃຫ້ດຳເນີນຢູ່ໃນຄຣິສຕະຈັກຕໍ່ໄປ ໂດຍກ່າວວ່າ ຖ້າຢູ່ນອກຄຣິສຕະຈັກແລ້ວ ບໍ່ມີຄວາມລອດພົ້ນ. ສ່ວນສວິງລີຕອບວ່າ: “ຢ່າໃຫ້ຂໍ້ກ່າວຫານີ້ກະທົບຕໍ່ພວກທ່ານເລີຍ. ດ້ວຍວ່າ, ຮາກຖານຂອງຄຣິສຕະຈັກແມ່ນພຣະສິລາອັນດຽວກັນ ກໍຄືພຣະຄຣິສອົງດຽວກັນທີ່ຕັ້ງຊື່ໃຫ້ເປໂຕ ເພາະເພິ່ນຍອມຮັບພຣະອົງຢ່າງສັດຊື່. ຜູ້ໃດກໍຕາມໃນທຸກຊົນຊາດທີ່ເຊື່ອຢ່າງສຸດໃຈໃນອົງພຣະເຢຊູເຈົ້າ ກໍເປັນທີ່ຍອມຮັບຂອງພຣະເຈົ້າ. ນີ້ແຫຼະຄືຄຣິສຕະຈັກທີ່ແທ້ຈິງ ແລະ ນອກເໜືອຈາກຄຣິສຕະຈັກນີ້ ບໍ່ມີຜູ້ໃດສາມາດລອດພົ້ນໄດ້.”[16] ຜົນຂອງການປະຊຸມໃນຄັ້ງນີ້ ມີຜູ້ແທນຄົນໜຶ່ງຂອງເຈົ້າຄະນະໄດ້ຮັບເຊື່ອໃນຄຳສອນຂອງຂະບວນການປະຕິຮູບ. *{GC 181.1}*

ສະພາບໍ່ໄດ້ດຳເນີນການຕໍ່ສວິງລີແຕ່ຢ່າງໃດ, ສ່ວນຄຣິສຕະຈັກໂຣມກໍກຽມຕົວທີ່ຈະໂຈມຕີອີກ. ເມື່ອສວິງລີໄດ້ຮັບຮູ້ເຖິງແຜນອຸບາຍຂອງພວກສັດຕູຈຶ່ງກ່າວວ່າ: “ປ່ອຍພວກເຂົາໃຫ້ໂຈມຕີສາ, ໜ້າຜາບໍ່ຢ້ານຄື້ນທະເລທີ່ກະທົບຢູ່ເບື້ອງລຸ່ມສັນໃດ ຂ້າພະເຈົ້າກໍບໍ່ຢ້ານພວກເຂົາສັນນັ້ນ.”[17] ການເຄື່ອນໄຫວຂອງພວກຜູ້ນຳຄຣິສຕະຈັກໄດ້ແຕ່ສົ່ງຜົນດີຕໍ່ຂະບວນການທີ່ພວກເຂົາພະຍາຍາມທຳລາຍ. ມີການເຜີຍແຜ່ຫຼັກຄວາມຈິງຢ່າງຕໍ່ເນື່ອງ. ໃນເຍຍລະມັນມີຜູ້ສັດທາໃນຂະບວນການນີ້ຮູ້ສຶກທໍ້ຖອຍທີ່ລູເທີຫາຍໜ້າໄປ, ຄົນເຫຼົ່ານີ້ກັບມີກຳລັງໃຈຂຶ້ນໃໝ່ເມື່ອເຫັນການປະກາດຂ່າວປະເສີດໃນສວິສເຊີແລນ. *{GC 181.2}*

ໂຕ້ວາທີກັບຝ່າຍຄຣິສຕະຈັກໂຣມ

ຍິ່ງຂະບວນການປະຕິຮູບຢັ່ງຮາກລົງໃນນະຄອນຊູຣິກ, ຜົນກໍຍິ່ງປາກົດໃຫ້ເຫັນ ໂດຍມີການປາບປາມຄວາມຊົ່ວ ແລະ ການສົ່ງເສີມໃຫ້ຄົນມີຄວາມສາມັກຄີປອງດອງກັນ ແລະ ຢູ່ກັນຢ່າງມີລະບຽບ. ສວິງລີຂຽນວ່າ: “ຄວາມສະຫງົບສຸກດຳລົງຢູ່ໃນບ້ານເມືອງຂອງເຮົາ. ບໍ່ມີການຜິດຖຽງກັນ ຫຼື ຄວາມໜ້າໄຫວ້ຫຼັງຫຼອກ; ບໍ່ມີຄວາມອິດສາ ຫຼື ການທະເລາະວິວາດກັນ. ຄວາມເປັນອັນໜຶ່ງອັນດຽວກັນເຊັ່ນນີ້ມາແຕ່ໃສ ນອກຈາກຈະມາຈາກອົງພຣະຜູ້ເປັນເຈົ້າ ແລະ ຄຳສອນຂອງພວກເຮົາ ທີ່ສົ່ງຜົນແຫ່ງສັນຕິສຸກ ແລະ ສິນລະທຳອັນດີງາມຕໍ່ພວກເຮົາຢ່າງເຕັມລົ້ນ?”[18] *{GC 181.3}*

ຂະບວນການປະຕິຮູບຍິ່ງມີໄຊຊະນະຫຼາຍສ່ຳໃດ ພວກຝ່າຍຄຣິສຕະຈັກໂຣມຍິ່ງຕັ້ງໜ້າເພື່ອທຳລາຍລົງຫຼາຍສ່ຳນັ້ນ. ເມື່ອເຫັນວ່າການກົດຂີ່ຂົ່ມເຫັງວຸ້ງວາຍຂອງລູເທີໃນເຍຍລະມັນບໍ່ໄດ້ຜົນຫຼາຍ, ຄົນເຫຼົ່ານີ້ຈຶ່ງຕັດສິນໃຈປະເຊີນໜ້າກັບຂະບວນການປະຕິຮູບ ດ້ວຍການນຳໃຊ້ອາວຸດຂອງການປະຕິຮູບເອງ. ພວກເຂົາຈະໃຫ້ມີການໂຕ້ວາທີກັບສວິງລີ ແລະ ຈະຈັດການທຸກຢ່າງເພື່ອໃຫ້ໝັ້ນໃຈວ່າພວກຕົນຈະເປັນຝ່າຍຊະນະ ໂດຍຈະເປັນຝ່າຍເລືອກທັງສະຖານທີ່ໂຕ້ວາທີ ແລະ ກຳມະການຕັດສິນ. ຖ້າຫາກວ່າສວິງລີຕົກຢູ່ໃນອຳນາດຂອງພວກເຂົາແລ້ວ ກໍຈະລະວັງເພື່ອບໍ່ໃຫ້ເພິ່ນໜຸດມືໄປໄດ້. ຖ້າຈັດການປິດປາກຜູ້ນຳແລ້ວ, ພວກເຂົາຈະສາມາດທຳລາຍຂະບວນການປະຕິຮູບຢ່າງໄວວາ. ຢ່າງໃດກໍຕາມ, ພວກເຂົາປິດບັງຈຸດປະສົງນີ້ໄວ້ຢ່າງດີ. *{GC 181.4}*

ມີການກຳນົດໃຫ້ເມືອງບາເດັນ (Baden) ເປັນສະຖານທີ່ຈັດການໂຕ້ວາທີ, ແຕ່ສວິງລີບໍ່ຢູ່. ສະພານະຄອນຊູຣິກສົ່ງໄສໃນແຜນອຸບາຍຂອງພວກຝ່າຍສັນຕະປາປາ ແລະ ເມື່ອເຫັນວ່າຄົນທີ່ຍອມຮັບຂ່າວປະເສີດໃນກຸ່ມເມືອງທີ່ປົກຄອງດ້ວຍລະບອບສັນຕະປາປາຖືກປະຫານດ້ວຍການເຜົາໄຟ, ພວກເຂົາຈຶ່ງຫ້າມບໍ່ໃຫ້ອາຈານຂອງພວກເຂົາສ່ຽງໄພໃນຄັ້ງນີ້. ຖ້າພົບກັນທີ່ຊູຣິກແລ້ວ, ເພິ່ນພ້ອມທີ່ຈະປະເຊີນກັບທຸກຄົນທີ່ຄຣິສຕະຈັກໂຣມຈະສົ່ງມາ, ແຕ່ບໍ່ດົນມານີ້ ມີການປະຫານຊີວິດຄົນທີ່ເປັນພະຍານ

[16] ໂດບີນເຍ, ສະບັບຕີພິມຢູ່ນະຄອນ ລອນດອນ, ເຫຼັ້ມ 8, ບົດ 11.
[17] ໄວລີ, ເຫຼັ້ມ 8, ບົດ 11.
[18] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 8, ບົດ 15.

ຝ່າຍຄວາມຈິງທີ່ເມືອງບາເດັນ, ຖ້າໄປທີ່ນັ້ນກໍຈະຕ້ອງຕາຍຢ່າງແນ່ນອນ. ທ້າວ ເອໂກລຳພາດິອັດ (Oecolampadius) ແລະ ທ້າວ ຮານເລີ (Haller) ຖືກເລືອກໃຫ້ເປັນຕົວແທນຂອງຝ່າຍຂະບວນການ ປະຕິຮູບ, ໃນຂະນະທີ່ ດຣ. ເອັກ (Dr. Eck) ຜູ້ເລືອງນາມເປັນຫົວຫອກຝ່າຍຄຣິສຕະຈັກໂຣມ ພ້ອມ ດ້ວຍນັກວິຊາການ ແລະ ຜູ້ນຳຄຣິສຕະຈັກຫຼາຍຄົນ. *{GC 182.1}*

ເຖິງແມ່ນວ່າສວິງລີບໍ່ໄດ້ຢູ່ໃນທີ່ປະຊຸມ, ແຕ່ຄົນທີ່ນັ້ນໄດ້ສຳຜັດເຖິງອິດທິພົນຂອງເພິ່ນ. ພວກ ຝ່າຍສັນຕະປາປາໄດ້ກຳນົດເລຂາທຸກຄົນ ແລະ ຫ້າມຄົນອື່ນເຮັດການຈົດບັນທຶກ ໂດຍມີໂທດ ປະຫານສຳລັບຄົນທີ່ຝ່າຝືນ. ເຖິງຢ່າງນັ້ນກໍດີ, ໃນທຸກວັນສວິງລີໄດ້ຮັບລາຍງານບັນທຶກການປະຊຸມ ທີ່ເມືອງບາເດັນຢ່າງຖືກຕ້ອງແນ່ນອນ. ມີນັກສຶກສາຟັງການໂຕ້ວາທີ ແລະ ຈົດປະເດັນຕ່າງໆ ຂອງວັນນັ້ນໃນຕອນແລງ. ມີນັກສຶກສາອີກສອງຄົນອາສານຳສົ່ງເອກະສານເຫຼົ່ານີ້ ພ້ອມຈົດໝາຍ ປະຈຳວັນຂອງ ເອໂກລຳພາດິອັດ ໄປຍັງສວິງລີທີ່ນະຄອນຊູຣິກ. ສວິງລີຈະຂຽນຈົດໝາຍທຸກຄືນເພື່ອ ແນະນຳ ແລະ ໃຫ້ຄຳປຶກສາ ສ່ວນນັກສຶກສາທັງສອງຄົນກໍຈະນຳຈົດໝາຍກັບມາທີ່ເມືອງບາເດັນໃນ ຕອນເຊົ້າ. ແລ້ວເພື່ອຫຼົບຫຼີກຍາມທີ່ປະຕູເມືອງ ພວກເຂົາກໍຈະເອົາກະຕ່າໄກ່ຢອງໃສ່ຫົວ ຈຶ່ງສາມາດ ຜ່ານເຂົ້າໄປໄດ້ໂດຍບໍ່ມີບັນຫາ. *{GC 182.2}*

ຢ່າງນີ້ແຫຼະສວິງລີຈຶ່ງຍືນຢັດຕໍ່ສູ້ກັບພວກສັດຕູຜູ້ມີເລ່ມີລ່ຽມ. ໄມໂຄນຽສ (Myconius) ກ່າວ ວ່າ: “ຖ້າເພິ່ນໄດ້ອະພິປາຍໃນທີ່ປະຊຸມທ່າມກາງພວກສັດຕູຂອງເພິ່ນ ກໍຈະບໍ່ໄດ້ຜົນເທົ່າກັບທີ່ເພິ່ນໄດ້ ອົດຫຼັບອົດນອນໄຕ່ຕອງໄຄ່ຄວນ ແລະ ສົ່ງຄຳແນະນຳໄປຍັງເມືອງບາເດັນນັ້ນ.”[19] *{GC 183.1}*

ຝ່າຍພວກຄຣິສຕະຈັກໂຣມຕ່າງຄົນຕ່າງຮູ້ສຶກຕື່ນເຕັ້ນດີໃຈ ເພາະຄາດວ່າໄຊຊະນະຢູ່ໃນມືແລ້ວ, ພວກເຂົາຈຶ່ງມາທີ່ເມືອງບາເດັນໂດຍໃສ່ເສື້ອຜ້າທີ່ຫຼູຫຼາທີ່ສຸດ ເຊິ່ງປະດັບປະດາດ້ວຍເພັດພອຍທີ່ສະທ້ອນ ແສງເຫຼື້ອມຍິບຍັບ. ຄົນເຫຼົ່ານີ້ກິນລ້ຽງກັນຢ່າງອີ່ມໜຳສຳລານ ໂດຍເລືອກອາຫານທີ່ແພງທີ່ສຸດກັບ ເຫຼົ້າແວງຊັ້ນດີທີ່ສຸດ ແລະ ຊົດເຊີຍພາລະໜ້າທີ່ດ້ານສາສະໜາຂອງຕົນດ້ວຍການກິນລ້ຽງຢ່າງເຮຮາ. ສິ່ງ ເຫຼົ່ານີ້ຕ່າງຈາກພວກນັກປະຕິຮູບຫຼາຍ, ປະຊາຊົນເບິ່ງພວກນັກປະຕິຮູບບໍ່ຕ່າງກັບກຸ່ມຄົນຂໍທານ; ພວກ ເພິ່ນນັ່ງກິນເຂົ້າບໍ່ດົນ ຍ້ອນວ່າອາຫານການກິນນັ້ນລຽບງ່າຍ. ເຈົ້າຂອງບ້ານທີ່ ເອໂກລຳພາດິອັດ ພັກ ຢູ່ນັ້ນມີໂອກາດເບິ່ງນັກປະຕິຮູບຜູ້ນີ້ຢູ່ໃນຫ້ອງນອນຫຼາຍເທື່ອ ແລະ ສັງເກດວ່າທຸກຄັ້ງລາວກຳລັງ ສຶກສາ ຫຼື ອະທິຖານ. ເຈົ້າຂອງບ້ານປະຫຼາດໃຈຫຼາຍຈຶ່ງລາຍງານວ່າ ຢ່າງໜ້ອຍຄົນນອກຮີດຜູ້ ນີ້ “ທຳມະທຳໂມຫຼາຍ.” *{GC 183.2}*

ໃນທີ່ປະຊຸມ, “[ດຣ.] ເອັກ ຢ່າງເປັນທ່າທີ່ອວດອົ່ງທະນົງຕົວ ແລ້ວຂຶ້ນທຳມາດທີ່ປະດັບໄວ້ ຢ່າງຫຼູຫຼາ, ໃນຂະນະທີ່ ເອໂກລຳພາດິອັດ ຜູ້ຕ່ຳຕ້ອຍແຕ່ງຕົວທຳມະດາ ແລະ ຖືກບັງຄັບໃຫ້ນັ່ງ ເທິງຕັ່ງໄມ້ຫຍາບໆຕໍ່ໜ້າຄູ່ຕໍ່ສູ້.”[20] ສຽງຂອງ ດຣ. ເອັກ ດັງກ້ອງຢູ່ໃນຫ້ອງປະຊຸມ ໃນຂະນະທີ່ ຄວາມໝັ້ນໃຈຂອງລາວລົ້ນຟ້າ ໂດຍທີ່ລາວໄດ້ຮັບແຮງບັນດານໃຈ ເພາະຫວັງວ່າຈະໄດ້ຮັບທອງຄຳ ແລະ ຊື່ສຽງ ເນື່ອງຈາກວ່າຜູ້ທີ່ປົກປ້ອງຄຳສອນຂອງຄຣິສຕະຈັກໂຣມຈະໄດ້ຮັບຄ່າຕອບແທນຢ່າງ ງົດງາມ. ເມື່ອການໃຊ້ເຫດຜົນບໍ່ໄດ້ເປັນໄປຕາມທີ່ຕ້ອງການ ລາວກໍສົບປະໝາດ ແລະ ເຖິງກັບເວົ້າຄຳ ຫຍາບຄາຍ. *{GC 183.3}*

ເອໂກລຳພາດິອັດ ເປັນຄົນອ່ອນນ້ອມຖ່ອມຕົນ ແລະ ບໍ່ມີຄວາມເຊື່ອໝັ້ນໃນຕົນເອງ. ລາວບໍ່ ຢາກຕໍ່ສູ້ ແຕ່ກໍເຂົ້າປະເຊີນໜ້າດ້ວຍການປະຕິຍານຕົນວ່າ: “ຂ້າພະເຈົ້າບໍ່ຍອມຮັບມາດຕະຖານ

[19] ໂດບິນເຍ, ເຫຼັ້ມ 11, ບົດ 13.
[20] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 11, ບົດ 13.

ອື່ນໃດນອກຈາກພຣະຄຳຂອງພຣະເຈົ້າ."[21] ເຖິງແມ່ນວ່າລາວເປັນຄົນສຸພາບອ່ອນນ້ອມ, ແຕ່ລາວພິສູດຕົນວ່າເປັນຄົນທີ່ມີຄວາມສາມາດ ແລະ ມີຄວາມໜັກແໜ້ນບໍ່ຫວັ່ນໄຫວ. ໃນຂະນະທີ່ພວກຝ່າຍຄຣິສຕະຈັກໂຣມອ້າງທຳນຽມຂອງຄຣິສຕະຈັກຕາມເຄີຍ, ເອໂກລຳພາດິອັດ ຍັງຢຶດໝັ້ນໃນພຣະ-ຄຳພີ ໂດຍກ່າວວ່າ: "ທຳນຽມປະເພນີບໍ່ມີນ້ຳໜັກໃນສວິສເຊີແລນຂອງພວກເຮົາ ນອກຈາກຈະເປັນໄປຕາມລັດຖະທຳມະນູນ, ສ່ວນເລື່ອງທີ່ກ່ຽວຂ້ອງກັບຄວາມເຊື່ອນັ້ນ ພຣະຄຳພີແມ່ນທຳມະນູນຂອງພວກເຮົາ."[22] *{GC 183.4}*

ຄວາມແຕກຕ່າງລະຫວ່າງຄົນໂຕ້ວາທີສອງຝ່າຍມີອິດທິພົນຕໍ່ຄວາມຮູ້ສຶກຂອງຜູ້ຟັງບໍ່ໜ້ອຍ. ປະຊາ-ຊົນປະທັບໃຈກັບນັກປະຕິຮູບທີ່ມີທ່າທີອ່ອນນ້ອມຖ່ອມຕົນ, ສະຫງົບສຸຂຸມ ແລະ ໃຊ້ເຫດຜົນຢ່າງ ຈະແຈ້ງ. ແຕ່ພວກເຂົາຮູ້ສຶກລັງກຽດການອວດອ້າງ ແລະ ທ່າທີທີ່ຟົດມັນຂອງ ດຣ. ເອັກ. *{GC 184.1}*

ການອະພິປາຍສືບຕໍ່ 18 ວັນ ແລະ ເມື່ອສິ້ນສຸດການປະຊຸມ ພວກຝ່າຍສັນຕະປາປາກໍອ້າງ ດ້ວຍຄວາມໝັ້ນໃຈຫຼາຍວ່າ ພວກຕົນເປັນຝ່າຍຊະນະ. ຜູ້ແທນຈາກກຸ່ມເມືອງຕ່າງ ໆ ສ່ວນໃຫຍ່ເຂົ້າຂ້າງ ຄຣິສຕະຈັກໂຣມ, ສ່ວນສະພາທີ່ເມືອງບາເດັນກໍປະກາດວ່າ ພວກນັກປະຕິຮູບນັ້ນໄດ້ປະລາໄຊ ແລະ ຖືກ ຕັດອອກຈາກຄຣິສຕະຈັກພ້ອມສວິງລີຜູ້ເປັນຜູ້ນຳຂອງພວກເຂົາ. ແຕ່ຜົນຂອງການປະຊຸມນັ້ນສະແດງໃຫ້ ເຫັນວ່າແມ່ນຝ່າຍໃດໄດ້ປຽບແທ້, ເພາະຂະບວນການຂອງຝ່າຍໂປຣແຕັສຕັງໄດ້ຮັບແຮງສະໜັບສະໜູນ ຫຼາຍຈາກເຫດການໃນຄັ້ງນີ້. ໃນບໍ່ຊ້າເມືອງເບີນ ແລະ ເມືອງບາເຊັນປະກາດວ່າຈະຢືນຝ່າຍຂະບວນການ ປະຕິຮູບ. *{GC 184.2}*

[21] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 11, ບົດ 13.
[22] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 11, ບົດ 13.

ຍາມຄ່ຳຄືນ ພວກນາຍຄູຈາກໂຮງຮຽນຕາມຊົນນະບົດ
ໄດ້ອ່ານພຣະຄຳພີໃຫ້ຄົນທີ່ມາຮວມຕົວກັນຢູ່ຮອບເຕົາໄຟ.

ເບິ່ງໜ້າ 149.

Image generated with AI (Google Gemini).

10

ການປະຕິຮູບສືບຕໍ່ໃນອານາຈັກເຢຍລະມັນ

ລູເທີຫາຍຕົວໄປ

ຄົນທົ່ວອານາຈັກເຢຍລະມັນຕົກໃຈ ແລະ ເປັນຫ່ວງທີ່ລູເທີຫາຍຕົວໄປຢ່າງເລິກລັບ, ທຸກບ່ອນທຸກແຫ່ງມີຄົນຖາມເຖິງເພີ່ນ; ຂ່າວລືທີ່ແປກປະຫຼາດກໍຖືກແຜ່ກະຈາຍ ແລະ ມີຫຼາຍຄົນເຊື່ອວ່າເພີ່ນຖືກຂ້າຕາຍເສຍແລ້ວ. ມີການຄ່ຳຄວນໄວ້ທຸກຄັ້ງໃຫຍ່ ບໍ່ພຽງແຕ່ຈາກຜູ້ທີ່ປະກາດຕົວເປັນມິດ ແຕ່ຈາກຫຼາຍພັນຄົນທີ່ຍັງບໍ່ໄດ້ເປີດເຜີຍຈຸດຢືນສະໜັບສະໜູນຂະບວນການປະຕິຮູບອີກດ້ວຍ. ມີຫຼາຍຄົນປະຕິຍານວ່າຈະແກ້ແຄ້ນແທນເພີ່ນ. *{GC 185.1}*

ຜູ້ນຳຝ່າຍຄຣິສຕະຈັກໂຣມເກີດຄວາມສະທ້ານຢ້ານກົວທີ່ເຫັນວ່າກະແສຕໍ່ຕ້ານພວກເຂົານັ້ນຮຸນແຮງຫຼາຍຂຶ້ນ. ເຖິງແມ່ນວ່າໃນເບື້ອງຕົ້ນ ພວກເຂົາຮູ້ສຶກດີໃຈກັບຂ່າວທີ່ວ່າລູເທີຕົງໄດ້ເສຍຊີວິດໄປແລ້ວ, ແຕ່ໃນບໍ່ຊ້ຳ ພວກເຂົາພັດປາຖະໜາທີ່ຈະຫຼົບຊ່ອນຈາກຄວາມໂກດຮ້າຍຂອງປະຊາຊົນ. ພວກສັດຕູຂອງລູເທີຮູ້ສຶກວ່າ ການກະທຳທີ່ກ້າຫານທີ່ສຸດຂອງເພິ່ນໃນຂະນະທີ່ເພິ່ນຍັງເຄື່ອນໄຫວຢູ່ ບໍ່ໄດ້ລົບກວນພວກເຂົາເທົ່າກັບຕອນທີ່ເພິ່ນຫາຍຕົວໄປ. ບັດນີ້ຄົນທີ່ເຄີຍຮູ້ສຶກໃຈຮ້າຍ ແລະ ພະຍາຍາມທຳລາຍນັກປະຕິຮູບຜູ້ຫານກ້າຄົນນີ້ ກັບຮູ້ສຶກຢ້ານໃນເມື່ອເພິ່ນຖືກຂັງຢ່າງຊ່ວຍເຫຼືອຕົວເອງບໍ່ໄດ້. ມີຄົນໜຶ່ງກ່າວວ່າ: “ມີທາງດຽວທີ່ຈະຊ່ວຍຊີວິດຂອງພວກເຮົາໄດ້, ນັ້ນຄືການໄຕ້ກະບອງໄຟ ແລະ ຊອກຫາລູເທີໄປທົ່ວໂລກ ແລ້ວນຳພາລາວກັບມາຫາປະຊາຊົນທີ່ກຳລັງຮຽກຮ້ອງຫາລາວ.”[1] ຄຳປະກາດຂອງຈັກກະພັດເບິ່ງຄືເປັນໝັນ. ພວກຕົວແທນຂອງສັນຕະປາປາມີຄວາມໂມໂຫເປັນຟືນເປັນໄຟທີ່ເຫັນຄົນເອົາໃຈໃສ່ຄຳປະກາດຂອງຈັກກະພັດໜ້ອຍກວ່າຊະຕາຊີວິດຂອງລູເທີ. *{GC 185.2}*

ຂ່າວທີ່ລູເທີປອດໄພແຕ່ຖືກຂັງນັ້ນ ຊ່ວຍສະຫງົບຄວາມຢ້ານກົວຂອງປະຊາຊົນ ແລະ ໃນຂະນະດຽວກັນກໍຍິ່ງເຮັດໃຫ້ພວກເຂົາມີຄວາມກະຕືລືລົ້ນໃນການສະໜັບສະໜູນເພິ່ນ. ປະຊາຊົນພາກັນອ່ານງານຂຽນຂອງເພິ່ນດ້ວຍຄວາມຢາກຮູ້ຢາກຮຽນຫຼາຍກວ່າທີ່ເຄີຍເປັນ. ມີຄົນຈຳນວນຫຼວງຫຼາຍເຂົ້າຮ່ວມໃນຂະບວນການຂອງນັກປະຕິຮູບຜູ້ກ້າຫານ ທີ່ປົກປ້ອງພຣະຄຳຂອງພຣະເຈົ້າທ່າມກາງອັນຕະລາຍ. ຂະບວນການປະຕິຮູບເຂັ້ມແຂງຂຶ້ນຕາມລຳດັບ. ເມັດພືດແຫ່ງຄວາມຈິງທີ່ລູເທີຫວ່ານແລ້ວນັ້ນໄດ້ງອກຂຶ້ນໃນທຸກແຫ່ງ. ຄັນຈະທຽບກັນແລ້ວ ຜົນທີ່ໄດ້ມາເນື່ອງຈາກທີ່ເພິ່ນບໍ່ຢູ່ນັ້ນ ຫຼາຍກວ່າຜົນທີ່ຈະໄດ້ຖ້າເພິ່ນຍັງຢູ່ຕໍ່ເຮັດວຽກ, ເພາະຄົນງານຄົນອື່ນຮູ້ສຶກວ່າຕົນຕ້ອງຮັບຜິດຊອບໃນເມື່ອຜູ້ນຳບໍ່ຢູ່. ຄົນເຫຼົ່ານີ້ໄດ້ຮັບການເສີມຄວາມເຊື່ອໃໝ່ ແລະ ມີຄວາມກະຕືລືລົ້ນກວ່າເດີມຈຶ່ງບາກບັ່ນໄປຂ້າງໜ້າຢ່າງສຸດກຳລັງ ເພື່ອວຽກງານທີ່ລູເທີເລີ່ມຕົ້ນຢ່າງດີນັ້ນຈະບໍ່ໄດ້ຖືກລະງັບລົງ. *{GC 185.3}*

---

[1] ໂດບິນເຍ (D’Aubigné), ເຫຼັ້ມ 9, ບົດ 1.

ຊາຕານນຳພາການປະຕິຮູບປອມແປງ

ແຕ່ຊາຕານກໍບໍ່ໄດ້ຢູ່ລ້າ, ບັດນີ້ມັນພະຍາຍາມເຮັດໃນສິ່ງທີ່ມັນມັກເຮັດທຸກຄັ້ງທີ່ມີການປະຕິຮູບ ກໍຄື ຫຼອກລວງ ແລະ ທຳລາຍປະຊາຊົນ ໂດຍການສະເໜີຂະບວນການປະຕິຮູບປອມແທນການປະຕິຮູບທີ່ ແທ້ຈິງ. ເຊັ່ນດຽວກັບທີ່ມີພຣະຄຣິສປອມໃນສະຕະວັດທຳອິດຂອງຄຣິສຕະຈັກ, ກໍມີຜູ້ເຜີຍພຣະທຳປອມ ໃນສະຕະວັດທີ 16 ດ້ວຍ. *{GC 186.1}*

ມີຜູ້ຊາຍຈຳນວນໜ້ອຍທີ່ຮູ້ສຶກຊາບຊຶ້ງກັບກະແສຄວາມຕື່ນເຕັ້ນທີ່ກຳລັງເກີດຂຶ້ນໃນໝູ່ຄົນທີ່ນັບຖື ສາສະໜາ. ຄົນເຫຼົ່ານີ້ຫຼົງຕົວເອງວ່າ ຕົນໄດ້ຮັບການສຳແດງເປັນພິເສດຈາກສະຫວັນ ແລະ ອ້າງວ່າຕົນ ໄດ້ຮັບມອບໝາຍຈາກພຣະເຈົ້າ ໃຫ້ສືບຕໍ່ການປະຕິຮູບຈົນສຳເລັດ ເຊິ່ງພວກເຂົາອ້າງວ່າ ລູເທີໄດ້ພຽງ ແຕ່ເລີ່ມຕົ້ນໄວ້ຢ່າງແປະ ໆ ບາງ ໆ ເທົ່ານັ້ນ. ແຕ່ໃນຄວາມເປັນຈິງ ພວກເຂົາກຳລັງທຳລາຍວຽກງານຂອງ ລູເທີຕ່າງຫາກ, ເພາະພວກເຂົາປະຕິເສດຫຼັກການສຳຄັນທີ່ເປັນຮາກຖານຂອງຂະບວນການປະຕິຮູບຄັ້ງ ໃຫຍ່ນັ້ນ ກໍຄືພຣະຄຳຂອງພຣະເຈົ້າເປັນມາດຕະຖານທີ່ພຽງພໍສຳລັບຄວາມເຊື່ອ ແລະ ການປະພຶດ ປະຕິບັດ. ແທນທີ່ຈະໃຫ້ພຣະຄຳອັນບໍ່ມີຜິດພາດຂອງພຣະເຈົ້ານຳທາງຊີວິດ ພວກເຂົາຕັ້ງມາດຕະຖານ ທີ່ບໍ່ແນ່ນອນ ຄືຄວາມຮູ້ສຶກ ແລະ ຈິນຕະນາການຂອງຕົນເອງ. ພຣະຄຳພີເປັນເຄື່ອງກວດກາຄົ້ນພົບ ຄວາມຜິດ, ການທີ່ພວກເຂົາເອົາພຣະຄຳພີອອກໄປ ຈຶ່ງເປັນການເປີດປະຕູໃຫ້ຊາຕານເຂົ້າມາຄວບຄຸມ ຈິດໃຈຕາມຄວາມປາຖະໜາຂອງມັນ. *{GC 186.2}*

ຄົນໜຶ່ງໃນພວກຜູ້ເຜີຍພຣະທຳປອມ ອ້າງວ່າຕົນໄດ້ຮັບການສັ່ງສອນຈາກທູດສະຫວັນຄັບຣີເອນ (Gabriel). ນັກສຶກສາຄົນໜຶ່ງທີ່ເຂົ້າຮ່ວມກັບລາວໄດ້ປະຖິ້ມການຮຽນ ແລະ ປະກາດວ່າຕົນໄດ້ຮັບ ສະຕິປັນຍາຈາກພຣະເຈົ້າໂດຍກົງ ຈຶ່ງສາມາດອະທິບາຍພຣະຄຳຂອງພຣະອົງໄດ້; ຄົນທີ່ມີແນວໂນ້ມ ຄັ່ງໄຄ້ສາສະໜາກໍເຂົ້າຮ່ວມກັບພວກເຂົາ. ການເຄື່ອນໄຫວຂອງຄົນເຫຼົ່ານີ້ສ້າງຄວາມແຕກຕື່ນໃນໝູ່ ປະຊາຊົນບໍ່ໜ້ອຍ. ການເທດສະໜາຂອງລູເທີໄດ້ປຸກປະຊາຊົນທົ່ວໄປໃຫ້ຕື່ນຂຶ້ນ ແລະ ຊ່ວຍໃຫ້ ພວກເຂົາສຳນຶກວ່າຈຳເປັນຕ້ອງມີການປະຕິຮູບ, ບັດນີ້ບາງຄົນທີ່ຈິງໃຈກໍຖືກຊັກຈູງໃຫ້ຫຼົງຕາມພວກ ຜູ້ເຜີຍພຣະທຳຄົນໃໝ່ເຫຼົ່ານີ້. *{GC 186.3}*

ພວກຜູ້ນຳການເຄື່ອນໄຫວນີ້ໄດ້ເດີນທາງໄປທີ່ເມືອງວິດເທັນເບີກ ແລະ ຂໍຮ້ອງເມລັງໂທນກັບເພື່ອນ ຮ່ວມງານຂອງເພິ່ນໃຫ້ຮັບເອົາຄຳສອນຂອງພວກເຂົາ ໂດຍກ່າວວ່າ: “ພຣະເຈົ້າຊົງໃຊ້ພວກເຮົາມາເພື່ອ ສັ່ງສອນປະຊາຊົນ. ເຮົາໄດ້ສົນທະນາກັບອົງພຣະຜູ້ເປັນເຈົ້າໂດຍກົງ, ເຮົາຈຶ່ງຮູ້ລ່ວງໜ້າວ່າຈະເກີດຫຍັງ ຂຶ້ນ. ສະຫຼຸບງ່າຍ ໆ ວ່າ ພວກເຮົາເປັນອັກຄະສາວົກ ແລະ ເປັນຜູ້ເຜີຍພຣະທຳ, ພວກເຮົາຈຶ່ງຂໍອຸທອນ ຕໍ່ ດຣ. ລູເທີ.”[2] *{GC 187.1}*

ຝ່າຍພວກນັກປະຕິຮູບຕົກຕະລຶງ ແລະ ຮູ້ສຶກສັບສົນ ເພາະນີ້ແມ່ນສິ່ງໃໝ່ທີ່ພວກເຂົາບໍ່ເຄີຍ ປະສົບພົບພໍ້ມາກ່ອນ ຈຶ່ງບໍ່ຮູ້ວ່າຄວນດຳເນີນການແນວໃດ. ເມລັງໂທນກ່າວວ່າ: “ມີວິນຍານພິເສດ ຢູ່ໃນຄົນເຫຼົ່ານີ້ແທ້ ແຕ່ເປັນວິນຍານຫຍັງ? . . . ດ້ານໜຶ່ງເຮົາຕ້ອງລະວັງທີ່ຈະບໍ່ດັບພຣະວິນຍານຂອງ ພຣະເຈົ້າ, ແຕ່ໃນອີກດ້ານໜຶ່ງ ເຮົາຕ້ອງລະວັງບໍ່ໃຫ້ວິນຍານຈາກຊາຕານຊັກຈູງພວກເຮົາໃຫ້ຫຼົງ ຜິດ.”[3] *{GC 187.2}*

---

[2] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 7.

[3] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 7.

ຜົນຂອງຄຳສອນໃໝ່ປາກົດໃຫ້ເຫັນ

ບໍ່ຊ້າຜົນຂອງຄຳສອນໃໝ່ນີ້ກໍປາກົດໃຫ້ເຫັນ. ປະຊາຊົນຖືກນຳໃຫ້ບໍ່ໃສ່ໃຈໃນພຣະຄຳພີ ແລະ ບາງຄົນ ກໍບໍ່ອ່ານເລີຍ. ເກີດຄວາມວຸ້ນວາຍໃນສະຖາບັນການສຶກສາຕ່າງ ໆ, ນັກສຶກສາບໍ່ຍອມຟັງກົດລະບຽບ; ພວກເຂົາປະຖິ້ມການຮ່ຳຮຽນ ແລະ ພາກັນຖອນຕົວອອກຈາກມະຫາວິທະຍາໄລ. ຄົນທັ້ງຫຼາຍທີ່ຄິດ ວ່າຕົນມີຄວາມສາມາດທີ່ຈະຟື້ນຟູ ແລະ ຄວບຄຸມວຽກງານການປະຕິຮູບໄດ້ ກັບກາຍເປັນຜູ້ທີ່ນຳ ຂະບວນການປະຕິຮູບນັ້ນໄປສູ່ຂອບເຫວແຫ່ງຄວາມພິນາດ. ບັດນີ້ພວກທີ່ສະໜັບສະໜູນຄຣິສຕະຈັກ ໂຣມໄດ້ຄວາມໝັ້ນໃຈຄືນມາ ຈຶ່ງຮ້ອງອອກມາດ້ວຍຄວາມດີອົກດີໃຈວ່າ: “ມາເດີ! ໃຫ້ພວກເຮົາສູ້ອີກ ຮອບດຽວ ແລ້ວທຸກຢ່າງຈະເປັນຂອງພວກເຮົາ.”[4] *{GC 187.3}*

ໃນຂະນະນັ້ນລູເທີຍັງຢູ່ທີ່ຜາສາດຫີນແຫ່ງວາດເບີກ (Wartburg), ເມື່ອໄດ້ຍິນຂ່າວຂອງເຫດການ ທີ່ເກີດຂຶ້ນຈຶ່ງກ່າວດ້ວຍຄວາມເປັນຫ່ວງວ່າ: “ຂ້າພະເຈົ້າຄາດໄວ້ສະເໝີວ່າ ຊາຕານຈະສົ່ງໄພພິບັດ ຕົວນີ້ມາໃຫ້ພວກເຮົາ.”[5] ເພິ່ນເບິ່ງເຫັນທາດແທ້ຂອງຄົນເຫຼົ່ານີ້ທີ່ສຳຄັນຕົວເອງວ່າເປັນຜູ້ເຜີຍພຣະ-ທຳ ແລະ ເຫັນເຖິງຄວາມອັນຕະລາຍທີ່ຄຸກຄາມພັນທະກິດແຫ່ງການປະກາດຄວາມຈິງ. ການທີ່ ສັນຕະປາປາ ແລະ ຈັກກະພັດຕໍ່ຕ້ານນັ້ນ ບໍ່ໄດ້ເຮັດໃຫ້ເພິ່ນລຳບາກໃຈເທົ່າກັບທີ່ເປັນຢູ່ໃນຂະນະນີ້. ສັດຕູ ທີ່ຮ້າຍກາດທີ່ສຸດຂອງຂະບວນການປະຕິຮູບມາຈາກພວກທີ່ອ້າງວ່າເປັນມິດ. ຫຼັກຄວາມຈິງຕ່າງ ໆ ທີ່ເຮັດໃຫ້ເພິ່ນມີຄວາມຊົມຊື່ນຍິນດີ ແລະ ທີ່ໄດ້ເລົ້າໂລມຈິດໃຈຂອງຕົນນັ້ນ ບັດນີ້ກຳລັງຖືກໃຊ້ເພື່ອສ້າງ ຄວາມຂັດແຍ້ງ ແລະ ກໍ່ຄວາມວຸ້ນວາຍໃນຄຣິສຕະຈັກ. *{GC 187.4}*

ພຣະວິນຍານຂອງພຣະເຈົ້າຊົງນຳລູເທີໃນວຽກງານການປະຕິຮູບ ຈົນເພິ່ນໄດ້ເຮັດໃນສິ່ງທີ່ເກີນ ຄວາມຄິດຂອງຕົນເອງ. ເພິ່ນບໍ່ໄດ້ຕັ້ງໃຈທີ່ຈະມາເຖິງຈຸດຢືນເຫຼົ່ານັ້ນ ຫຼື ໃຫ້ມີການປ່ຽນແປງຢ່າງ ໃຫຍ່ຫຼວງເຊັ່ນນີ້. ເພິ່ນເປັນພຽງເຄື່ອງມືໃນພຣະຫັດຂອງພຣະເຈົ້າຜູ້ຊົງຣິດທານຸພາບສູງສຸດ. ຢ່າງໃດ ກໍຕາມ, ເພິ່ນກໍຢ້ານກົວຢູ່ເລື້ອຍ ໆ ເພາະເປັນຫ່ວງວ່າວຽກງານຂອງຕົນຈະສົ່ງຜົນອອກໄປແບບໃດ. ມີ ຄັ້ງໜຶ່ງເພິ່ນກ່າວວ່າ: “ຄຳສອນຂອງຂ້າພະເຈົ້າບໍ່ສາມາດເຮັດອັນຕະລາຍໄດ້ ເພາະເປັນຂ່າວປະເສີດ ນັ້ນເອງ, ແຕ່ຖ້າຂ້າພະເຈົ້າຮູ້ວ່າຄຳສອນນັ້ນໄດ້ສ້າງຄວາມເສຍຫາຍໃຫ້ຜູ້ໃດຜູ້ໜຶ່ງ ແມ່ນຈະເປັນຜູ້ທີ່ ຕ່ຳຕ້ອຍທີ່ສຸດກໍຕາມ, ຂ້າພະເຈົ້າກໍຈະຖອນຄຳສອນນັ້ນຄືນທັນທີ ແລະ ຖ້າບໍ່ໄດ້ຖອນກໍຍິນດີຕາຍສິບ ເທື່ອ.”[6] *{GC 188.1}*

ແລ້ວບັດນີ້ເມືອງວິດເທັນເບີກ ອັນເປັນສູນກາງຂອງຂະບວນການປະຕິຮູບ ກຳລັງຕົກຢູ່ພາຍໃຕ້ ອິດທິພົນຂອງຄວາມຄັ່ງໄຄ້ ແລະ ສະພາບທີ່ໄຮ້ກົດໝາຍ. ສະພາບທີ່ໜ້າຢ້ານກົວນີ້ ບໍ່ໄດ້ເກີດຈາກ ຄຳສອນຂອງລູເທີ, ແຕ່ທີ່ວ່າອານາຈັກເຢຍລະມັນ ຝ່າຍພວກສັດຕູກ່າວຫາວ່າ ລູເທີເປັນຕົ້ນເຫດຂອງ ສະພາບທີ່ເກີດຂຶ້ນ. ບາງຄັ້ງເພິ່ນທູນຖາມພຣະເຈົ້າດ້ວຍຈິດໃຈທີ່ຂົມຂື່ນວ່າ: “ຫຼືວ່າ ຂະບວນການ ປະຕິຮູບຄັ້ງສຳຄັນນີ້ຈະຈົບລົງພຽງເທົ່ານີ້ບໍ?”[7] ແລ້ວໃນຂະນະທີ່ເພິ່ນອະທິຖານດ້ວຍຄວາມຮ້ອນຮົນ ສັນຕິສຸກກໍຫຼັ່ງໄຫຼເຂົ້າມາໃນຈິດໃຈ. ເພິ່ນຈຶ່ງອະທິຖານຕໍ່ໄປອີກວ່າ: “ວຽກງານນີ້ບໍ່ແມ່ນຂອງຂ້ານ້ອຍ ແຕ່ ເປັນຂອງພຣະອົງ. ພຣະອົງຈະບໍ່ຍອມໃຫ້ງານນີ້ຖືກທຳລາຍໄປຍ້ອນຄວາມງົ່ມງວາຍ ຫຼື ຄວາມຄັ່ງໄຄ້

[4] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 7.
[5] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 7.
[6] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 7.
[7] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 7.

ຫຼົງໄຫຼ.” ຢ່າງໃດກໍຕາມ, ເພິ່ນບໍ່ສາມາດຢູ່ເສີຍ ໆ ຕໍ່ໄປໄດ້ເມື່ອມີວິກິດການເຊັ່ນນີ້, ເພິ່ນຈຶ່ງຕັ້ງໃຈກັບຄືນໄປເມືອງວິດເທັນເບີກ. {GC 188.2}

ເພິ່ນສ່ຽງອອກເດີນທາງໂດຍບໍ່ລໍຊ້າ. ໃນຂະນະນັ້ນທາງການປະກາດວ່າເພິ່ນຍັງເປັນບຸກຄົນຕ້ອງຫ້າມ. ພວກສັດຕູມີສິດທີ່ຈະຂ້າເພິ່ນໄດ້, ສ່ວນຜູ້ທີ່ສະໜັບສະໜຸນກໍຖືກຫ້າມບໍ່ໃຫ້ຊ່ວຍເຫຼືອເພິ່ນ ຫຼື ໃຫ້ບ່ອນພັກ. ອຳນາດການປົກຄອງຝ່າຍຈັກກະພັດ ກຳລັງໃຊ້ມາດຕະການເດັດຂາດກັບຜູ້ທີ່ເຊື່ອໃນຄຳສອນຂອງເພິ່ນ. ແຕ່ເມື່ອເຫັນວ່າຂະບວນການປະກາດຂ່າວປະເສີດກຳລັງເຂົ້າສູ່ອັນຕະລາຍ ເພິ່ນຈຶ່ງອອກໄປຕໍ່ສູ້ໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ ເພື່ອປົກປ້ອງຫຼັກຄວາມຈິງ. {GC 188.3}

ລູເທີຂຽນຈົດໝາຍເຖິງເຈົ້າແຂວງທີ່ລະບຸເຫດຜົນທີ່ເພິ່ນຕັ້ງໃຈອອກຈາກຜາສາດວ່າດ: “ຂໍລາຍງານໃຫ້ທ່ານຊາບວ່າ ຂ້າພະເຈົ້າກຳລັງຈະເດີນທາງໄປເມືອງວິດເທັນເບີກ ໂດຍຜູ້ທີ່ຮັບຮອງຄວາມປອດໄພນັ້ນຍິ່ງໃຫຍ່ກວ່າເຈົ້າແຂວງຄົນໃດ ແມ່ນແຕ່ຜູ້ທີ່ມີສິດເລືອກຈັກກະພັດ. ຂ້າພະເຈົ້າບໍ່ຄິດທີ່ຈະຂໍໃຫ້ທ່ານສະໜັບສະໜຸນຂ້າພະເຈົ້າ, ແລະແທນທີ່ຈະປາຖະໜາໃຫ້ທ່ານປົກປ້ອງຂ້າພະເຈົ້າ ຂ້າພະເຈົ້າກໍຢາກປົກປ້ອງທ່ານ. ຖ້າຂ້າພະເຈົ້າຮູ້ວ່າທ່ານສາມາດປົກປ້ອງຂ້າພະເຈົ້າ ຫຼື ຄິດທີ່ຈະປົກປ້ອງຂ້າພະເຈົ້າແລ້ວ ຂ້າພະເຈົ້າກໍຈະບໍ່ໄປທີ່ເມືອງວິດເທັນເບີກເລີຍ. ບໍ່ມີດາບເຫຼັ້ມໃດທີ່ສາມາດຊຸກຍູ້ໃຫ້ຂະບວນການນີ້ສຳເລັດໄດ້. ພຣະເຈົ້າເທົ່ານັ້ນຕ້ອງເຮັດທຸກສິ່ງ ໂດຍປາສະຈາກຄວາມຊ່ວຍເຫຼືອ ຫຼື ຄວາມເຫັນດີຂອງມະນຸດ. ຜູ້ທີ່ມີຄວາມເຊື່ອໜ້ອຍທີ່ສຸດ ຄືຜູ້ທີ່ສາມາດປົກປ້ອງຜູ້ອື່ນໄດ້ດີທີ່ສຸດ.”[8] {GC 188.4}

ລູເທີຂຽນຈົດໝາຍອີກສະບັບໜຶ່ງໃນຂະນະທີ່ເດີນທາງໄປເມືອງວິດເທັນເບີກ ໂດຍເພິ່ນກ່າວເພິ່ມເຕີມວ່າ: “ຂ້າພະເຈົ້າພ້ອມແລ້ວທີ່ຈະເຮັດໃຫ້ທ່ານບໍ່ພໍໃຈ ແລະ ພ້ອມທີ່ຈະໃຫ້ມະນຸດທຸກຄົນໃນໂລກໂກດຮ້າຍໃສ່ຂ້າພະເຈົ້າ. ປະຊາຊົນຊາວເມືອງວິດເທັນເບີກເປັນລູກແກະຂອງຂ້າພະເຈົ້າບໍ່ແມ່ນບໍ? ພຣະເຈົ້າຊົງມອບໝາຍໃຫ້ຂ້າພະເຈົ້າເປັນຜູ້ເບິ່ງແຍງພວກເຂົາບໍ່ແມ່ນບໍ? ສະນັ້ນ, ຖ້າຈຳເປັນຂ້າພະເຈົ້າຄວນກ້າສ່ຽງຊີວິດເພື່ອຄົນເຫຼົ່ານີ້ບໍ່ແມ່ນບໍ? ຍິ່ງກວ່ານັ້ນ, ຂ້າພະເຈົ້າຢ້ານວ່າຈະມີຄວາມວຸ້ນວາຍເກີດຂຶ້ນໃນອານາຈັກເຢຍລະມັນ ເຊິ່ງພຣະເຈົ້າຈະຊົງໃຊ້ເປັນເຄື່ອງມືໃນການລົງໂທດບ້ານເມືອງຂອງພວກເຮົາ.”[9] {GC 189.1}

ຣິດອຳນາດຂອງພຣະຄຳພີ

ລູເທີເລີ່ມລົງມືເຮັດວຽກຢ່າງລະມັດລະວັງ ແລະ ດ້ວຍຄວາມອ່ອນນ້ອມຖ່ອມຕົນ, ໃນຂະນະດຽວກັນ ກໍຍັງມີຄວາມໝັ້ນຄົງເດັດດ່ຽວ. ເພິ່ນກ່າວວ່າ: “ສິ່ງທີ່ຄວາມຮຸນແຮງໄດ້ກໍ່ຂຶ້ນນັ້ນ ພວກເຮົາຕ້ອງໃຊ້ພຣະຄຳພີເພື່ອມ້າງທຳລາຍລົງ. ຂ້າພະເຈົ້າຈະບໍ່ໃຊ້ອຳນາດການບີບບັງຄັບຕໍ່ຄົນທີ່ງົມງວາຍ ແລະ ຂາດຄວາມເຊື່ອ. . . . ຈະຕ້ອງບໍ່ມີການບັງຄັບຜູ້ໃດ ເພາະວ່າເສລີພາບເປັນແກ່ນແທ້ຂອງຄວາມເຊື່ອ.”[10] {GC 189.2}

ໃນບໍ່ຊ້າຂ່າວທີ່ລູເທີກັບມາ ແລະ ຈະເທດສະໜານັ້ນດັງທົ່ວເມືອງວິດເທັນເບີກ. ຄົນຈາກທຸກສາລະທິດພາກັນມາຈົນລົ້ນໂບດ. ລູເທີຂຶ້ນທຳມາດແລ້ວສັ່ງສອນ ແລະ ຕັກເຕືອນວ່າກ່າວດ້ວຍສະຕິປັນຍາ ແລະ ຄວາມສຸພາບອ່ອນນ້ອມ. ເພິ່ນກ່າວເຖິງບາງຄົນທີ່ໃຊ້ຄວາມຮຸນແຮງເພື່ອໃຫ້ມີການຍົກເລີກພິທີສິນລະນຶກແບບຄຣິສຕະຈັກໂຣມວ່າ: {GC 189.3}

“ພິທີສິນລະນຶກແບບທີ່ຄຣິສຕະຈັກໂຣມເຮັດນັ້ນແມ່ນສິ່ງທີ່ບໍ່ດີ, ພຣະເຈົ້າຊົງຕໍ່ຕ້ານມັນ ແລະ ມັນກໍສົມຄວນຖືກຍົກເລີກໄປ. ຂ້າພະເຈົ້າປາຖະໜາໃຫ້ທົ່ວໂລກປ່ຽນຈາກສິນລະນຶກແບບກາໂຕລິກ ມາ

[8] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 8.
[9] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 7.
[10] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 8.

ເປັນພິທີລະນຶກເຖິງຄາບອາຫານສຸດທ້າຍຂອງພຣະຄຣິສ ຕາມທີ່ປາກົດຢູ່ໃນຂ່າວປະເສີດ. ແຕ່ຢ່າໄດ້ ບີບບັງຄັບຜູ້ໃດເລີຍໃຫ້ຍົກເລີກສິນລະນຶກ. ພວກເຮົາຕ້ອງຝາກເລື່ອງນີ້ໄວ້ໃນພຣະຫັດຂອງພຣະເຈົ້າ, ຕ້ອງ ໃຫ້ພຣະຄຳຂອງພຣະອົງເປັນຝ່າຍດຳເນີນການ ບໍ່ແມ່ນພວກເຮົາເອງ. ບາງຄົນອາດຖາມວ່າ, ເປັນ ຫຍັງຈຶ່ງເວົ້າຈັ່ງຊັ້ນ? ເພາະວ່າຂ້າພະເຈົ້າບໍ່ໄດ້ຖືຈິດໃຈຂອງມະນຸດໄວ້ໃນມື ເໝືອນຊ່າງປັ້ນໝໍ້ຖືກ້ອນ ດິນໜຽວ. ເຮົາມີສິດເວົ້າ ແຕ່*ບໍ່ມີສິດ*ລົງມື. ສະນັ້ນ, ຂໍໃຫ້ພວກເຮົາເທດສະໜາປະກາດ, ສ່ວນ ທີ່ເຫຼືອເປັນຂອງພຣະເຈົ້າ. ຖ້າຂ້າພະເຈົ້າຈະໃຊ້ກຳລັງ ແລ້ວຈະໄດ້ຫຍັງຕາມມາ? ໄດ້ແຕ່ໜ້າຕາ ບິດບ້ຽວ, ການຖືຕາມພິທີກຳ, ການຮຽນແບບ, ການຢຶດເອົາກົດລະບຽບຂອງມະນຸດ ແລະ ຄວາມ ໜ້າຊື່ໃຈຄົດ.... ແຕ່ຈະບໍ່ມີຄວາມຈິງໃຈ, ຄວາມເຊື່ອ ຫຼື ຄວາມຮັກ. ຖ້າຂາດສາມສິ່ງນີ້ແລ້ວ ກໍຈະ ບໍ່ມີປະໂຫຍດຫຍັງທັງໝົດ; ຂ້າພະເຈົ້າຈຶ່ງຖືວ່າຜົນເຊັ່ນນີ້ບໍ່ມີຄ່າເລີຍ.... ສິ່ງທີ່ພຣະເຈົ້າຊົງກະທຳໂດຍ ຜ່ານພຣະຄຳຂອງພຣະອົງ ຫຼາຍກວ່າສິ່ງທີ່ທ່ານ ແລະ ຂ້າພະເຈົ້າ ກັບຄົນທັງໂລກສາມາດເຮັດໄດ້ ດ້ວຍກຳລັງຮວມຂອງພວກເຮົາ. ພຣະເຈົ້າຊົງສຳຜັດທີ່ຈິດໃຈ ແລະ ເມື່ອຊະນະຈິດໃຈແລ້ວ ກໍຊະນະ ທຸກຢ່າງ....” *{GC 189.4}*

“ຂ້າພະເຈົ້າຈະເທດສະໜາ, ຈະອະທິບາຍ ແລະ ຈະຂຽນ ແຕ່ຈະບໍ່ບັງຄັບຜູ້ໃດ ເພາະຄວາມເຊື່ອ ເປັນເລື່ອງຂອງຄວາມສະໝັກໃຈ. ທ່ານທັງຫຼາຍເຫັນການກະທຳຂອງຂ້າພະເຈົ້າວ່າ ຂ້າພະເຈົ້າໄດ້ ຢືນຢັດຕໍ່ສູ້ສັນຕະປາປາ, ໃບລ້າງບາບ ແລະ ພວກທີ່ສະໜັບສະໜູນສັນຕະປາປາ ໂດຍບໍ່ໄດ້ໃຊ້ ຄວາມຮຸນແຮງ ແລະ ບໍ່ໄດ້ກໍ່ຄວາມວຸ້ນວາຍ. ຂ້າພະເຈົ້າໄດ້ປະກາດພຣະຄຳຂອງພຣະເຈົ້າດ້ວຍ ການເທດສະໜາ ແລະ ການຂຽນ. ຂ້າພະເຈົ້າເຮັດພຽງເທົ່ານີ້, ແຕ່ໃນຂະນະທີ່ຂ້າພະເຈົ້ານອນ ຫຼັບ,... ພຣະຄຳທີ່ຂ້າພະເຈົ້າປະກາດເທດສະໜາໄປນັ້ນ ໄດ້ທຳລາຍລະບອບສັນຕະປາປາ ຈົນບໍ່ມີ ເຈົ້າແຂວງຄົນໃດ ຫຼື ຈັກກະພັດອົງໃດທີ່ສ້າງຄວາມເສຍຫາຍໃຫ້ລະບອບນັ້ນເທົ່າກັບພຣະຄຳ. ຂ້າພະເຈົ້າ ບໍ່ໄດ້ເຮັດຫຍັງ, ຜົນທັງໝົດມາຈາກພຣະຄຳພີ. ຖ້າຂ້າພະເຈົ້າຂໍໃຫ້ມີການໃຊ້ກຳລັງ ທົ່ວອານາຈັກ ເຢຍລະມັນຄົງໄດ້ນອງເລືອດ, ແຕ່ມັນຈະໄດ້ປະໂຫຍດຫຍັງ? ໄດ້ແຕ່ຄວາມເພພັງ ແລະ ຄວາມພິນາດ ຂອງຮ່າງກາຍ ແລະ ຈິດວິນຍານ. ຂ້າພະເຈົ້າຈຶ່ງງຽບໄວ້ ແລະ ໃຫ້ພຣະຄຳຂອງພຣະເຈົ້າອອກຜົນເອງ ໄປທົ່ວໂລກ.”[11] *{GC 190.1}*

ລູເທີສືບຕໍ່ເທດສະໜາທຸກວັນຕະຫຼອດໜຶ່ງອາທິດ ໃຫ້ແກ່ຝູງຊົນທີ່ລໍຟັງດ້ວຍຄວາມຢາກຮູ້ໃນສິ່ງທີ່ ເພິ່ນປະກາດ. ພຣະຄຳຂອງພຣະເຈົ້າໄດ້ທຳລາຍຄວາມຄັ່ງໄຄ້ຫຼົ່ງໄຫຼທີ່ສະກົດຈິດປະຊາຊົນ. ອຳນາດ ຂອງຂ່າວປະເສີດໄດ້ນຳຄົນທີ່ຫຼົ່ງທາງໃຫ້ກັບມາສູ່ທາງແຫ່ງຄວາມຈິງ. *{GC 190.2}*

ລູເທີບໍ່ມີຄວາມປາຖະໜາທີ່ຈະປະເຊີນໜ້າກັບພວກຄັ່ງໄຄ້ທີ່ສ້າງຄວາມເສຍຫາຍຫຼາຍເຊັ່ນນີ້. ເພິ່ນຮູ້ ວ່າຄົນເຫຼົ່ານີ້ມີນິໄສເຈົ້າອາລົມ ແລະ ຂາດວິຈາລະນະຍານ; ຄົນເຫຼົ່ານັ້ນອ້າງວ່າຕົນໄດ້ຮັບແສງສະຫວ່າງ ພິເສດຈາກສະຫວັນ, ແຕ່ຖ້າມີຄົນຄັດຄ້ານໜ້ອຍດຽວ ຫຼື ຕັກເຕືອນດ້ວຍຄວາມຫວັງດີ ຫຼື ໃຫ້ ຄຳແນະນຳ ພວກເຂົາພັດທົນບໍ່ໄດ້ເລີຍ. ພວກທີ່ຄັ່ງໄຄ້ເຫຼົ່ານັ້ນອ້າງວ່າອຳນາດສູງສຸດຢູ່ທີ່ພວກເຂົາ ຈຶ່ງ ຮຽກຮ້ອງໃຫ້ທຸກຄົນຍອມຮັບຄຳສອນຂອງພວກຕົນໂດຍບໍ່ໃຫ້ທວງຖາມແຕ່ຢ່າງໃດ. ແຕ່ເມື່ອພວກເຂົາຂໍ ໃຫ້ລູເທີໄປພົບ, ເພິ່ນກໍຍອມ ແລະ ໄດ້ເປີດເຜີຍໃຫ້ເຫັນວ່າຄຳອວດອ້າງຂອງພວກເຂົານັ້ນບໍ່ເປັນຄວາມ ຈິງ ພວກຜູ້ເຜີຍພຣະທຳປອມເຫຼົ່ານັ້ນຈຶ່ງເດີນທາງອອກຈາກເມືອງວິດເທັນເບີກທັນທີ. *{GC 190.3}*

ຄວາມຄັ່ງໄຄ້ໄດ້ຖືກຢັບຢັ້ງໄປໄລຍະເວລາໜຶ່ງ ແຕ່ຫຼາຍປີຕໍ່ມາກໍປະທຸຂຶ້ນອີກຄັ້ງໜຶ່ງດ້ວຍຄວາມ ຮຸນແຮງ ແລະ ຜົນເສຍຫາຍທີ່ຮ້າຍແຮງກວ່າເກົ່າ. ລູເທີກ່າວເຖິງພວກຜູ້ນຳການເຄື່ອນໄຫວນີ້ວ່າ:

[11] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 8.

“ພວກເຂົາຖືວ່າພຣະຄຳພີເປັນພຽງຕົວອັກສອນທີ່ບໍ່ມີຊີວິດ, ແລ້ວພວກເຂົາກໍຮ້ອງຂຶ້ນພ້ອມກັນວ່າ, ‘ພຣະວິນຍານ! ພຣະວິນຍານ!’ ແຕ່ແນ່ນອນ ຂ້າພະເຈົ້າຈະບໍ່ຕາມໄປໃນທາງທີ່ວິນຍານເຊິ່ງຢູ່ໃນພວກເຂົານັ້ນນຳພາໄປ. ຂໍໃຫ້ພຣະເຈົ້າຊົງເມດຕາຂ້າພະເຈົ້າ ໃຫ້ພົ້ນຈາກຄຣິສຕະຈັກທີ່ມີແຕ່ນັກບຸນເປັນສະມາຊິກ. ຂ້າພະເຈົ້າປາຖະໜາທີ່ຈະຢູ່ກັບຄົນທີ່ອ່ອນນ້ອມຖ່ອມຕົນ, ຄົນອ່ອນແອ ແລະ ຄົນເຈັບປ່ວຍ, ຄືຄົນທີ່ສຳນຶກເຖິງຄວາມບາບຂອງຕົນ ແລະ ຄ່ຳຄວນຮ້ອງຫາພຣະອົງຢູ່ສະເໝີຈາກສ່ວນເລິກຂອງຫົວໃຈ ເພື່ອຂໍໃຫ້ພຣະອົງຊົງປອບໃຈ ແລະ ຊ່ວຍຊູ.”[12] {GC 190.4}

ທ່າມກາງພວກທີ່ຄັ່ງໄຄ້ເຫຼົ່ານັ້ນ ໂທມັດ ມຸນເຊີ (Thomas Munzer) ເປັນຄົນທີ່ເຄື່ອນໄຫວຫຼາຍທີ່ສຸດ. ລາວເປັນຄົນທີ່ມີຄວາມສາມາດຫຼາຍ ເຊິ່ງຖ້າລາວໄດ້ໃຊ້ຄວາມສາມາດນັ້ນໃນທາງທີ່ຖືກຕ້ອງ ກໍຄົງໄດ້ເຮັດໃນສິ່ງທີ່ເປັນປະໂຫຍດ, ແຕ່ລາວບໍ່ໄດ້ຮຽນຮູ້ເຖິງຫຼັກການເບື້ອງຕົ້ນແຫ່ງທຳມະທີ່ແທ້ຈິງ. “ລາວປາຖະໜາຢ່າງແຮງກ້າທີ່ຈະປະຕິຮູບໂລກ ແຕ່ລືມໃນຂໍ້ທີ່ຄົນຄັ່ງໄຄ້ທັ້ງຫຼາຍເບິ່ງຂ້າມ ຄືໃຫ້ການປະຕິຮູບນັ້ນເລີ່ມຕົ້ນທີ່ຕົນເອງ.”[13] ລາວມີຄວາມທະເຍີທະຍານຢາກໄດ້ຕຳແໜ່ງ ແລະ ອິດທິພົນ, ບໍ່ຍອມເປັນຮອງໃຜ, ແມ່ນແຕ່ລູເທີເອງ. ລາວປະກາດວ່າທີ່ພວກນັກປະຕິຮູບຢຶດເອົາພຣະຄຳພີເປັນບັນທັດຖານຊີວິດແທນສັນຕະປາປານັ້ນ ເປັນການຕັ້ງລະບອບສັນຕະປາປາໃນຮູບແບບໃໝ່. ລາວອ້າງວ່າລາວໄດ້ຮັບມອບໝາຍຈາກພຣະເຈົ້າໃຫ້ສອນການປະຕິຮູບທີ່ແທ້ຈິງ. ມຸນເຊີກ່າວວ່າ: “ຄົນທີ່ມີວິນຍານນີ້ກໍມີຄວາມເຊື່ອທີ່ແທ້ຈິງ ເຖິງແມ່ນວ່າລາວຈະບໍ່ເຄີຍເຫັນພຣະຄຳພີຈັກເທື່ອ.”[14] {GC 191.1}

ອາຈານທີ່ຄັ່ງໄຄ້ທັ້ງຫຼາຍຍອມໃຫ້ຈິດໃຈຖືກຄວບຄຸມດ້ວຍຄວາມຮູ້ສຶກ ໂດຍຖືວ່າທຸກຄວາມຄິດ ແລະ ຄວາມຮູ້ສຶກທີ່ຜຸດຂຶ້ນໃນໃຈເປັນພຣະສຸຣະສຽງຂອງພຣະເຈົ້າ; ສະນັ້ນ, ພວກເຂົາຈຶ່ງເຮັດໃນສິ່ງທີ່ເກີນຄວາມສົມຄວນ. ບາງຄົນເຖິງກັບເຜົາພຣະຄຳພີຂອງຕົນຖິ້ມ ໂດຍກ່າວວ່າ: “ຕົວອັກສອນຂ້າໃຫ້ຕາຍ ແຕ່ພຣະວິນຍານໃຫ້ຊີວິດ.” ຄຳສອນຂອງມຸນເຊີຖືກໃຈຄົນທີ່ມັກເລື່ອງມະຫັດສະຈັນ ໃນຂະນະທີ່ມັນສະໜອງຄວາມຫຍິ່ງຂອງພວກເຂົາ ໂດຍການຍົກຄວາມຄິດຂອງມະນຸດໄວ້ເໜືອພຣະຄຳຂອງພຣະເຈົ້າ. ມີຫຼາຍພັນຄົນຮັບເຊື່ອໃນຄຳສອນຂອງລາວ. ໃນບໍ່ຊ້າລາວປະນາມການມີລະບົບລະບຽບທຸກຢ່າງໃນທີ່ປະຊຸມນະມັດສະການ ແລະ ປະກາດວ່າການເຊື່ອຟັງພວກເຈົ້າແຂວງ ເປັນການພະຍາຍາມຮັບໃຊ້ພຣະເຈົ້າ ແລະ ເບລີອາ[15] ພ້ອມກັນ. {GC 191.2}

ຈິດໃຈຂອງປະຊາຊົນທີ່ເລີ່ມຖິ້ມທຳລາຍແອກຂອງລະບອບສັນຕະປາປາ ກໍເລີ່ມຮູ້ສຶກວ່າບໍ່ຢາກອົດທົນຕໍ່ອຳນາດການປົກຄອງ. ຄຳສອນທີ່ຍຸຍົງປຸກປັ່ນຂອງມຸນເຊີທີ່ອ້າງວ່າມາຈາກພຣະເຈົ້ານັ້ນ ໄດ້ນຳພາປະຊາຊົນໃຫ້ປະຕິເສດການຄວບຄຸມທຸກຢ່າງ ແລະ ປ່ອຍຕົວໃຫ້ເຮັດຕາມອາລົມຄວາມຮູ້ສຶກຢ່າງເຕັມທີ່. ສິ່ງທີ່ຕາມມາຄືການກະບົດ ແລະ ການຕໍ່ສູ້ທີ່ຮ້າຍແຮງ ຈົນເກີດການນອງເລືອດຕາມທົ່ງໄຮ່ທົ່ງນາທົ່ວອານາຈັກເຢຍລະມັນ. {GC 191.3}

ລູເທີແປພຣະຄຳພີ

ເມື່ອລູເທີເຫັນຂະບວນການປະຕິຮູບຖືກກ່າວຫາດ້ວຍຜົນຂອງຄວາມຄັ່ງໄຄ້, ຄວາມທຸກໃຈທີ່ເພີ່ນເຄີຍມີເມື່ອເພິ່ນຢູ່ເມືອງເອີເຟີດນັ້ນ ໄດ້ກັບເຂົ້າມາອີກເປັນສອງເທົ່າ. ພວກເຈົ້າແຂວງຝ່າຍລະບອບສັນຕະປາປາກ່າວວ່າ ການກະບົດທີ່ເກີດຂຶ້ນເປັນຜົນໂດຍກົງຂອງຄຳສອນຂອງລູເທີ ແລະ ມີຫຼາຍຄົນພ້ອມທີ່ຈະ

[12] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 10, ບົດ 10.
[13] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 8.
[14] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 10, ບົດ 10.
[15] ໝາຍເຖິງຊາຕານ, ເບິ່ງ 2 ໂກຣິນໂທ 6:15.

ຄ້ອຍຕາມຄວາມຄິດນີ້. ເຖິງແມ່ນວ່າຂໍ້ກ່າວຫານີ້ບໍ່ມີເຄົ້າຄວາມເປັນຈິງເລີຍ, ແຕ່ມັນສ້າງຄວາມລຳບາກໃຈໃຫ້ລູເທີຫຼາຍ. ເພິ່ນຮູ້ສຶກເໝືອນຈະທົນບໍ່ໄດ້ ທີ່ເຫັນພັນທະກິດການປະກາດຫຼັກຄວາມຈິງຖືກນັບຮວມກັບຄວາມຄັ່ງໄຄ້ທີ່ຕ່ຳຊ້າທີ່ສຸດ. ສ່ວນພວກຜູ້ນຳການກະບົດກຸງດຊັງລູເທີ ເພາະເພິ່ນບໍ່ພຽງແຕ່ຕໍ່ຕ້ານຄຳສອນ ແລະ ຂໍ້ອ້າງຂອງພວກເຂົາທີ່ອ້າງວ່າໄດ້ຮັບການດົນໃຈຈາກພຣະເຈົ້າແລ້ວ ແຕ່ເພິ່ນກໍຍັງປະກາດວ່າພວກເຂົາເປັນກະບົດຕໍ່ອຳນາດການປົກຄອງດ້ວຍ. ຄົນເຫຼົ່ານີ້ແກ້ແຄ້ນດ້ວຍການປະນາມລູເທີ ວ່າເປັນຈອມຫຼອກລວງທີ່ຕ່ຳຊ້າ. ເບິ່ງຄືວ່າລູເທີໄດ້ເຮັດໃຫ້ທັງພວກເຈົ້າແຂວງ ແລະ ປະຊາຊົນກຸງດຊັງຕົນເອງ. *{GC 192.1}*

ຄົນທັງຫຼາຍທີ່ສະໜັບສະໜູນຄຣິສຕະຈັກໂຣມຕ່າງຄົນຕ່າງດີອົກດີໃຈ ເພາະພວກເຂົາຄາດວ່າໃກ້ຈະເຫັນຄວາມພິນາດຂອງຂະບວນການປະຕິຮູບຢ່າງໄວວາ. ພວກເຂົາຍັງກ່າວໂທດລູເທີສຳລັບຄຳສອນຜິດໆທີ່ເພິ່ນໄດ້ທຸ້ມເທກຳລັງເພື່ອແກ້ໄຂໃຫ້ຖືກຕ້ອງ. ກຸ່ມພວກທີ່ຄັ່ງໄຄ້ໄດ້ເວົ້າເອົາເອງວ່າ ພວກຕົນບໍ່ໄດ້ຮັບຄວາມເປັນທຳ ເຊິ່ງເຮັດໃຫ້ປະຊາຊົນຈຳນວນຫຼວງຫຼາຍເຫັນໃຈພວກເຂົາ; ແລ້ວກໍເປັນຢ່າງນີ້ຢູ່ເລື້ອຍໆ, ຄືຄົນທີ່ເຮັດຜິດກໍຖືກນັບວ່າເປັນພວກທີ່ຍອມສະຫຼະຊີວິດເພື່ອຄວາມເຊື່ອ, ພວກທີ່ຄັ່ງໄຄ້ໃນສະໄໝລູເທີກໍເຊັ່ນກັນ. ສະນັ້ນ, ຄົນທັງຫຼາຍທີ່ທຸ້ມເທກຳລັງເພື່ອຕໍ່ຕ້ານຂະບວນການປະຕິຮູບກາຍເປັນທີ່ເຫັນໃຈ ແລະ ເປັນທີ່ຍົກຍ້ອງວ່າເປັນເຫຍື່ອຂອງການກົດຂີ່ຂົ່ມເຫັງທີ່ໂຫດຮ້າຍ. ນີ້ແມ່ນວຽກງານຂອງຊາຕານ, ໂດຍມີຄວາມຄິດກະບົດເປັນແຮງບັນດານໃຈຢູ່ເບື້ອງຫຼັງ ເຊິ່ງຄວາມຄິດນີ້ໄດ້ປາກົດເປັນຄັ້ງທຳອິດໃນສະຫວັນເມື່ອຊາຕານກະບົດຕໍ່ພຣະເຈົ້າ. *{GC 192.2}*

ຊາຕານເຮັດວຽກຢູ່ຕະຫຼອດເວລາເພື່ອຫຼອກລວງມະນຸດໃຫ້ເອີ້ນຄວາມບາບວ່າເປັນຄວາມຊອບທຳ ແລະ ເອີ້ນຄວາມຊອບທຳວ່າເປັນຄວາມບາບ. ມັນໄດ້ປະສົບຜົນສຳເລັດຫຼາຍໃນວຽກງານນີ້! ການທີ່ຜູ້ຮັບໃຊ້ທີ່ສັດຊື່ຂອງພຣະເຈົ້າຖືກຕຳໜິຕິຕຽນ ເພາະພວກເຂົາຢືນຢັດປົກປ້ອງຄວາມຈິງໂດຍບໍ່ຫວັ່ນໄຫວ ເປັນເລື່ອງທີ່ເກີດຂຶ້ນຢູ່ເລື້ອຍໆ! ຄົນທີ່ເປັນພຽງຕົວແທນຂອງຊາຕານກໍໄດ້ຮັບການຍົກຍ້ອງສັນລະເສີນ ແລະ ຖືກນັບວ່າເປັນຄົນທີ່ຍອມສະຫຼະຊີວິດເພື່ອຄວາມເຊື່ອ, ໃນຂະນະທີ່ຄົນທັງຫຼາຍທີ່ສົມຄວນໄດ້ຮັບການນັບຖື ແລະ ການສະໜັບສະໜູນ ເພາະຄວາມຈົງຮັກພັກດີທີ່ມີຕໍ່ພຣະເຈົ້າ ພັດຖືກປະໄວ້ໃຫ້ຢືນຄົນດຽວ ທັງຖືກສົງໄສ ແລະ ບໍ່ໄດ້ຮັບຄວາມໄວ້ວາງໃຈ. *{GC 192.3}*

ຄວາມບໍຣິສຸດທຸມເທັດ ແລະ ການຊຳລະໃຈຈອມປອມຍັງຄົງດຳເນີນການຫຼອກລວງຂອງມັນຢູ່. ໃນປັດຈຸບັນສິ່ງເຫຼົ່ານີ້ຍັງສະແດງເຈດຕະນາແບບດຽວກັນກັບໃນສະໄໝລູເທີ ໂດຍມັນປາກົດໃນຮູບແບບຕ່າງໆ ເພື່ອຫັນເຫຄວາມຄິດຂອງຜູ້ຄົນອອກຈາກພຣະຄຳພີ ໄປໃສ່ໃຈກັບຄວາມຮູ້ສຶກຂອງຕົນເອງ ແທນທີ່ຈະປະຕິບັດຕາມພຣະບັນຍັດຂອງພຣະເຈົ້າ. ນີ້ເປັນເຄື່ອງມືທີ່ຊາຕານໃຊ້ໄດ້ຜົນຫຼາຍທີ່ສຸດໃນການນຳຄົນໃຫ້ປະນາມຄວາມບໍຣິສຸດ ແລະ ຄວາມຈິງ. *{GC 193.1}*

ລູເທີປົກປ້ອງຂ່າວປະເສີດຈາກການຖືກໂຈມຕີທີ່ມາຈາກທຸກທິດທາງ ແລະ ທຸກຄັ້ງທີ່ມີຄວາມຂັດແຍ້ງກໍມີການພິສູດວ່າ ພຣະຄຳຂອງພຣະເຈົ້າເປັນອາວຸດທີ່ມີອານຸພາບສູງ. ເພິ່ນນຳໃຊ້ພຣະຄຳພີໃນການຕໍ່ສູ້ກັບການຍາດແຍ່ງອຳນາດຂອງສັນຕະປາປາ ແລະ ປັດຂະຍາເຫດຜົນນິຍົມຂອງພວກນັກວິຊາການ; ໃນຂະນະດຽວກັນເພິ່ນຢືນໝັ້ນຄົງດັ່ງສິລາ ເພື່ອຕໍ່ສູ້ຄວາມຄັ່ງໄຄ້ທີ່ພະຍາຍາມຕີສະໜິດກັບຂະບວນການປະຕິຮູບ. *{GC 193.2}*

ພວກຕໍ່ຕ້ານແຕ່ລະຝ່າຍ ລ້ວນແຕ່ປະຖິ້ມພຣະຄຳພີດ້ວຍວິທີການຂອງຕົນເອງ ເພື່ອຍົກສະຕິປັນຍາຂອງມະນຸດຂຶ້ນເປັນແຫຼ່ງຄວາມຈິງທາງດ້ານສາສະໜາ ແລະ ຄວາມຮູ້. ພວກລັດທິເຫດຜົນນິຍົມໄດ້ຍົກຍ້ອງສະຕິປັນຍາຂອງມະນຸດ ແລະ ຕັ້ງການໃຊ້ເຫດຜົນໄວ້ເປັນບັນທັດຖານຂອງການເຊື່ອຖືໃນ

ສາສະໜາ. ອີກກຸ່ມໜຶ່ງກໍມີຄວາມນິຍົມໃນຄຣິສຕະຈັກໂຣມ ແລະ ອ້າງວ່າສັນຕະປາປາແຕ່ລະອົງໄດ້ຮັບການດົນໃຈຈາກພຣະເຈົ້າຕະຫຼອດມາຕັ້ງແຕ່ສະໄໝຂອງພວກອັກຄະສາວົກໂດຍບໍ່ຂາດສາຍ ແລະ ຈະເປັນດັ່ງນັ້ນໄປຕະຫຼອດການໂດຍບໍ່ປ່ຽນແປງ. ຄວາມຄິດເຊັ່ນນີ້ໄດ້ເປີດໂອກາດໃຫ້ມີການໃຊ້ອຳນາດເກີນຂອບເຂດ ແລະ ໃຫ້ເກີດຄວາມຊົ່ວທຸກຢ່າງ ໂດຍອ້າງວ່າມີຄວາມຊອບທຳ ເພາະເປັນອຳນາດທີ່ສືບທອດມາຈາກພວກອັກຄະສາວົກນັ້ນເອງ. ການດົນບັນດານໃຈທີ່ມູນເຊີກັບພັກພວກອ້າງນັ້ນ ນຳມາຈາກຈິນຕະນາການທີ່ແປປ່ຽນຂອງພວກເຂົາເອງ, ແຕ່ອິດທິພົນຂອງມັນຄືການມຸ່ງທຳລາຍອຳນາດທຸກຢ່າງ ບໍ່ວ່າຈະເປັນຂອງມະນຸດ ຫຼື ຂອງພຣະເຈົ້າ. ຫຼັກສາສະໜາຄຣິສທີ່ແທ້ຈິງຍອມຮັບເອົາພຣະຄຳຂອງພຣະເຈົ້າໃນຖານະຄັ້ງຊັບອັນປະເສີດແຫ່ງຫຼັກຄວາມຈິງ ແລະ ເປັນບັນທັດຖານທີ່ໃຊ້ໃນການທົດສອບການດົນໃຈທຸກຢ່າງ. *{GC 193.3}*

ເມື່ອລູເທີກັບມາຈາກວາດເບີກ, ເພິ່ນສືບຕໍ່ແປພຣະຄຳພີພາກພັນທະສັນຍາໃໝ່ຈົນສຳເລັດ; ຫຼັງຈາກນັ້ນບໍ່ດົນ, ຊາວເຢຍລະມັນສາມາດອ່ານຂ່າວປະເສີດໃນພາສາຂອງພວກເຂົາເອງ. ທຸກຄົນທີ່ຮັກຫຼັກຄວາມຈິງໄດ້ຮັບເອົາສະບັບແປພຣະຄຳພີດ້ວຍຄວາມຊົມຊື່ນຍິນດີ, ແຕ່ຄົນທີ່ເລືອກປະເພນີ ແລະ ກົດບັນຍັດຂອງມະນຸດພັດປະຕິເສດດ້ວຍທ່າທີທີ່ດູຖູກດູໝິ່ນ. *{GC 193.4}*

ພວກບາດຫຼວງຕົກໃຈທີ່ປະຊາຊົນທົ່ວໄປຈະສາມາດໂອ້ລົມກັບພວກເຂົາໃນເລື່ອງຄຳສອນຂອງພຣະ-ຄຳພີ, ເພາະຈະເປັນການເປີດເຜີຍໃຫ້ທຸກຄົນເຫັນວ່າພວກເຂົາຂາດຄວາມຮູ້. ການເວົ້າເປັນເຫດເປັນຜົນຝ່າຍເນື້ອໜັງຂອງພວກບາດຫຼວງເປັນອາວຸດທີ່ບໍ່ມີອຳນາດ ເມື່ອຕໍ່ສູ້ກັບພຣະຄຳພີອັນເປັນດາບແຫ່ງພຣະວິນຍານ. ຄຣິສຕະຈັກໂຣມຮວບຮວມອຳນາດທັງໝົດທີ່ມີຢູ່ ເພື່ອຫ້າມການແຈກຈ່າຍພຣະຄຳພີ; ແຕ່ບໍ່ວ່າຈະປະກາດຫ້າມຢ່າງໃດ ຄວາມພະຍາຍາມຂອງພວກເຂົາກໍບໍ່ໄດ້ຜົນ ບໍ່ວ່າຈະດ້ວຍການຈັບຄົນໄປທໍລະມານ ຫຼື ການສາບແຊ່ງໃຫ້ຕົກນະຮົກກໍຕາມ. ພວກເຂົາຍິ່ງປະນາມ ແລະ ຫ້າມພຣະຄຳຂອງພຣະເຈົ້າຫຼາຍເທົ່າໃດ ປະຊາຊົນກໍຍິ່ງຢາກຮູ້ວ່າພຣະຄຳພີສອນຫຍັງແທ້ຫຼາຍຂຶ້ນເທົ່ານັ້ນ. ທຸກຄົນທີ່ອ່ານໄດ້ກໍມີຄວາມກະຕືລືລົ້ນທີ່ຈະອ່ານພຣະຄຳຂອງພຣະເຈົ້າດ້ວຍຕົນເອງ ຈຶ່ງພົກພາຕິດຕົວ ແລະ ອ່ານແລ້ວອ່ານອີກ, ທັງຮູ້ສຶກບໍ່ອີ່ມໃຈຈົນພວກເຂົາສາມາດທ່ອງຈຳໄດ້ຫຼາຍບົດຫຼາຍຕອນ. ເມື່ອລູເທີເຫັນວ່າປະຊາຊົນຕອບຮັບພຣະຄຳພີໃໝ່ເປັນຢ່າງດີ ເພິ່ນຈຶ່ງເລີ່ມຕົ້ນແປພຣະຄຳພີເດີມ ແລະ ຈັດພິມເປັນຕອນໆ ທັນທີທີ່ແປແລ້ວ. *{GC 194.1}*

ບົດຄວາມງານຂຽນຂອງລູເທີເປັນທີ່ຕ້ອນຮັບທັງໃນເມືອງ ແລະ ໃນຊົນນະບົດເໝືອນກັນ. “ສິ່ງທີ່ລູເທີກັບມິດສະຫາຍຂອງເພິ່ນຂຽນ ມີຄົນອື່ນນຳໄປເຜີຍແຜ່. ມີນັກບວດບາງຄົນທີ່ເຫັນວ່າກົດຕ່າງໆຂອງສຳນັກນັກບວດບໍ່ຖືກຕ້ອງຕາມພຣະຄຳພີ ແລະ ຢາກແລກຊີວິດທີ່ກົງກັນຂ້າມກັບການເຄື່ອນໄຫວຮັບໃຊ້ ແຕ່ຄົນເຫຼົ່ານີ້ບໍ່ມີຄວາມຮູ້ພຽງພໍທີ່ຈະສອນພຣະຄຳຂອງພຣະເຈົ້າ ພວກເຂົາຈຶ່ງທຽວຕາມໝູ່ບ້ານໃນແຂວງຕ່າງໆ ແລະ ຂາຍໜັງສືຂອງລູເທີ ແລະ ພວກເພື່ອນຮ່ວມງານຂອງເພິ່ນຕາມເຮືອນຊານຂອງປະຊາຊົນ. ໃນບໍ່ຊ້າ ອານາຈັກເຢຍລະມັນຈຶ່ງເຕັມໄປດ້ວຍຄົນທີ່ຂາຍປຶ້ມຢ່າງກ້າຫານ.”[16] *{GC 194.2}*

ປະຊາຊົນສຶກສາພຣະຄຳພີ

ມີທັງຄົນຮັ່ງມີ ແລະ ຄົນຍາກຈົນ, ທັງຄົນຮຽນສູງ ແລະ ຄົນດ້ອຍການສຶກສາທີ່ຄົ້ນຄວ້າງານຂຽນເຫຼົ່ານີ້ດ້ວຍຄວາມຢາກຮູ້ຢາກຮຽນຫຼາຍທີ່ສຸດ. ຍາມຄ່ຳຄືນ ພວກນາຍຄູຈາກໂຮງຮຽນຕາມຊົນນະບົດ

[16] ໂດບິນເຍ, ເຫຼັ້ມ 9, ບົດ 11.

ໄດ້ອ່ານໃຫ້ຄົນທີ່ມາຮວມຕົວກັນຢູ່ຮອບເຕົາໄຟ. ທຸກຄັ້ງທີ່ມີການປະກາດ ກໍມີຄົນຮັບເຊື່ອຄວາມຈິງ, ມີຄົນຮັບເອົາພຣະທຳດ້ວຍຄວາມຍິນດີ ແລ້ວຫັນໄປບອກຂ່າວດີໃຫ້ຄົນອື່ນຕໍ່. {GC 194.3}

ຂໍ້ພຣະຄຳພີຕໍ່ໄປນີ້ໄດ້ຮັບການພິສູດວ່າເປັນຄວາມຈິງຜ່ານປະສົບການຂອງຄົນເຫຼົ່ານັ້ນ. “ການອະທິບາຍຂໍ້ຄຳສັ່ງສອນຂອງພຣະອົງໃຫ້ແສງສະຫວ່າງ ແລະ ນຳປັນຍາໃຫ້ແກ່ພວກຄົນໂງ່ຈ້າດ້ວຍ.” (ເພງສັນລະເສີນ 119:130). ການທີ່ປະຊາຊົນສຶກສາພຣະຄຳພີໄດ້ປ່ຽນແປງຄວາມຄິດ ແລະ ຈິດໃຈຂອງພວກເຂົາຢ່າງຫຼວງຫຼາຍ. ການປົກຄອງຂອງສັນຕະປາປາໄດ້ວາງແອກເຫຼັກຢູ່ເທິງຄໍປະຊາຊົນ ແລະ ກົດພວກເຂົາໄວ້ໃຫ້ຢູ່ໃນສະພາບທີ່ໂງ່ຈ້າ ແລະ ເສື່ອມເສຍ. ປະຊາຊົນເຮັດຕາມພິທີກຳຕ່າງ ໆ ຢ່າງງົມງວາຍຕາມລະບຽບຂອງຄຣິສຕະຈັກໂຣມ, ແຕ່ໃນທ່າມກາງພິທີກຳທາງສາສະໜາເຫຼົ່ານັ້ນ ແທບຈະບໍ່ຕ້ອງນຳໜ້ໃຈ ຫຼື ສະຕິປັນຍາມາກ່ຽວຂ້ອງເລີຍ. ຄຳເທດສະໜາຂອງລູເທີທີ່ສອນຄວາມຈິງອັນຈະແຈ້ງຈາກພຣະຄຳຂອງພຣະເຈົ້າ ແລະ ການເອົາພຣະຄຳພີມາວາງໄວ້ໃນມືຂອງປະຊາຊົນທົ່ວໄປ ໄດ້ປຸກພວກເຂົາໃຫ້ຕື່ນ ທັງໄດ້ຊຳລະຈິດວິນຍານໃຫ້ບໍຣິສຸດ ແລະ ສູງສົ່ງຂຶ້ນ; ນອກຈາກນັ້ນ, ຍັງໄດ້ເສີມສະຕິປັນຍາໃຫ້ມີພະລັງຄວາມຄິດທີ່ເຂັ້ມແຂງຂຶ້ນອີກດ້ວຍ. {GC 195.1}

ມີຄົນໃນທຸກລະດັບຊັ້ນຂອງສັງຄົມຖືພຣະຄຳພີໃນມື ແລະ ກ່າວປົກປ້ອງຄຳສອນຕ່າງ ໆ ຂອງຂະບວນການປະຕິຮູບ. ສ່ວນຄົນທີ່ສະໜັບສະໜູນລະບອບສັນຕະປາປາ ທີ່ເຄີຍປະຖິ້ມການສຶກສາພຣະຄຳພີໃຫ້ເປັນໜ້າທີ່ຂອງພວກບາດຫຼວງ ແລະ ພວກນັກບວດ, ບັດນີ້ກໍຂໍໃຫ້ສອງກຸ່ມນີ້ອອກມາໂຕ້ແຍ້ງກັບຄຳສອນໃໝ່ຂອງບັນດານັກປະຕິຮູບສາສະໜາ. ແຕ່ພວກບາດຫຼວງ ແລະ ພວກນັກບວດທັງບໍ່ຮູ້ພຣະຄຳພີ ແລະ ບໍ່ມີປະສົບການເຖິງຣິດອຳນາດຂອງພຣະເຈົ້າ; ສະນັ້ນ, ພວກເຂົາຈຶ່ງໄດ້ປະລາໄຊຢ່າງຮາບຄາບ ໂດຍຜູ້ຊະນະແມ່ນຄົນທີ່ພວກເຂົາເຄີຍປະນາມວ່າ ເປັນພວກນອກຮີດທີ່ຂາດການສຶກສາ. ມີນັກຂຽນກາໂຕລິກຂຽນວ່າ: “ເປັນຕາໜ່າຍຫຼາຍທີ່ລູເທີສອນພວກລູກສິດຂອງລາວວ່າ ຢ່າວາງໃຈໃນຄຳສອນອື່ນໃດນອກຈາກພຣະຄຳພີຢ່າງດຽວ.”[17] ມີຝູງຊົນເຕົ້າໂຮມກັນເພື່ອຟັງຄົນທີ່ມີການສຶກສາໜ້ອຍອະທິບາຍຫຼັກຄວາມຈິງ; ຊາວບ້ານທີ່ຮູ້ພຣະຄຳພີຍັງສາມາດໂອ້ລົມກັບກຸ່ມນັກສາສະໜາສາດທີ່ຮຽນສູງ ແລະ ມີວາທະສິນຄົມຄາຍ. ຄຳຕອບຂອງຜູ້ດ້ອຍການສຶກສາ ທີ່ອ້າງຄຳສອນອັນລຽບງ່າຍຈາກພຣະຄຳຂອງພຣະເຈົ້າ ໄດ້ເປີດໂປງໃຫ້ທຸກຄົນເຫັນວ່າ ບຸກຄົນສຳຄັນເຫຼົ່ານັ້ນຂາດຄວາມຮູ້ຢ່າງໜ້າອັບອາຍ. ມີກຳມະກອນ, ທະຫານ, ຜູ້ຍິງ ແລະ ແມ່ນແຕ່ເດັກນ້ອຍທີ່ຮູ້ພຣະຄຳພີຫຼາຍກວ່າພວກບາດຫຼວງ ແລະ ພວກນັກສາສະໜາສາດທີ່ຮຽນສູງ. {GC 195.2}

ຄວາມແຕກຕ່າງລະຫວ່າງເຫຼົ່າສາວົກແຫ່ງຂ່າວປະເສີດກັບຄົນທີ່ຍຶດຖືຄວາມງົມງວາຍຂອງລະບອບສັນຕະປາປາເຫັນໄດ້ຢ່າງຈະແຈ້ງ ບໍ່ວ່າໃນຊົນຊັ້ນນັກວິຊາການ ຫຼື ທ່າມກາງປະຊາຊົນທົ່ວໄປ. “ມີຊາວໜຸ່ມຜູ້ມີໃຈກວ້າງ . . . ທີ່ຕໍ່ຕ້ານຄົນເຖົ້າຄົນແກ່ຜູ້ປົກປ້ອງລະບອບສັນຕະປາປາ ຄືພວກທີ່ບໍ່ຍອມຮຽນພາສາດັ້ງເດີມ ຫຼື ສຶກສາອັນນະກຳ. ຊາວໜຸ່ມເຫຼົ່ານີ້ໄດ້ອຸທິດຕົນໃນການສຶກສາຄົ້ນຄວ້າພຣະຄຳພີ ແລະ ໃນການອ່ານອັນນະກຳບູຮານຈົນລຶ້ງເຄີຍ. ພວກເຂົາຫົວໄວ, ມີຈິດວິນຍານທີ່ສູງສົ່ງ ແລະ ມີໃຈກ້າຫານ. ໃນບໍ່ຊ້າພວກຊາວໜຸ່ມເຫຼົ່ານີ້ໄດ້ຄວາມຮູ້ຫຼາຍ ຈົນບໍ່ມີໃຜສາມາດແຂ່ງກັບພວກເຂົາໄດ້ເປັນເວລາດົນ. . . . ພວກເຂົາປົກປ້ອງຂະບວນການປະຕິຮູບ; ສະນັ້ນ, ເມື່ອມີການປະເຊີນໜ້າລະຫວ່າງພວກຊາວໜຸ່ມເຫຼົ່ານີ້ກັບນັກສາສະໜາສາດຝ່າຍຄຣິສຕະຈັກໂຣມໃນທີ່ປະຊຸມຕ່າງ ໆ, ພວກເຂົາກໍຈະໂຈມຕີຝ່າຍກົງກັນຂ້າມຢ່າງງ່າຍດາຍ ແລະ ດ້ວຍຄວາມໝັ້ນໃຈ ຈົນຄົນທີ່ຂາດຄວາມຮູ້ເຫຼົ່ານັ້ນລັງເລ ແລະ ອັບອາຍຂາຍໜ້າ ແລະ ກາຍເປັນທີ່ດູຖູກຂອງຄົນທັງປວງ.”[18] {GC 195.3}

[17] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 11.
[18] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 9, ບົດ 11.

ການກົດຂີ່ຂົ່ມເຫັງບໍ່ສາມາດທຳລາຍຄວາມເຊື່ອ

ເມື່ອພວກບາດຫຼວງຂອງຄຣິສຕະຈັກໂຣມເຫັນວ່າ ຈຳນວນຜູ້ທີ່ມາຮ່ວມປະຊຸມນະມັດສະການໜ້ອຍລົງ, ພວກເຂົາຈຶ່ງໄປຂໍຄວາມຊ່ວຍເຫຼືອຈາກພວກເຈົ້າເມືອງ ແລະ ພະຍາຍາມໃຊ້ທຸກວິທີທີ່ພໍມີອຳນາດເຮັດໄດ້ ເພື່ອນຳສະມາຊິກກັບຄືນມາ. ແຕ່ປະຊາຊົນໄດ້ພົບໃນຄຳສອນໃໝ່ ສິ່ງທີ່ຕອບສະໜອງຄວາມຕ້ອງການຝ່າຍຈິດວິນຍານ, ພວກເຂົາຈຶ່ງຫັນໄປຈາກຄົນທີ່ເຄີຍລ້ຽງພວກເຂົາດ້ວຍເຂົ້າແກບເປັນເວລາດົນນານ ກໍຄືພວກບາດຫຼວງທີ່ສອນໃຫ້ພວກເຂົາປະຕິບັດຕາມພິທີກຳຢ່າງງົມງວາຍ ແລະ ຖືເອົາທຳນຽມປະເພນີຂອງມະນຸດ. *{GC 196.1}*

ເມື່ອພວກຜູ້ສອນຄວາມຈິງປະສົບກັບການກົດຂີ່ຂົ່ມເຫັງ, ພວກເຂົາປະຕິບັດຕາມຖ້ອຍຄຳຂອງພຣະຄຣິສທີ່ຊົງກ່າວວ່າ: “ເມື່ອພວກເຂົາຂົ່ມເຫັງພວກເຈົ້າໃນເມືອງໜຶ່ງ ຈົ່ງໜີໄປທີ່ເມືອງອື່ນ.” (ມັດທາຍ 10:23). ແສງແຫ່ງຄວາມຈິງໄດ້ສ່ອງໄປຍັງທຸກສະຖານທີ່, ບໍ່ວ່າພວກເຂົາຈະລີ້ໄພຢູ່ບ່ອນໃດກໍມີຄົນເປີດປະຕູຕ້ອນຮັບໃຫ້ພັກທີ່ນັ້ນ ແລ້ວພວກເຂົາກໍຈະປະກາດພຣະຄຣິສ ບາງຄັ້ງໃນໂບດ ຫຼື ວ່າຖ້າຖືກປະຕິເສດບໍ່ໃຫ້ໃຊ້ໂບດ ກໍຈະເທດສະໜາໃນເຮືອນປະຊາຊົນ ຫຼື ໃນສະຖານທີ່ນອກອາຄານ. ທຸກສະຖານທີ່ທີ່ມີຄົນຟັງກໍກາຍເປັນວິຫານສັກສິດ. ຫຼັກຄວາມຈິງຈຶ່ງໄດ້ຮັບການເຜີຍແຜ່ດ້ວຍກຳລັງເຫືອແຮງ, ຄວາມໝັ້ນໃຈ ແລະ ພະລັງຣິດເດດທີ່ຕ້ານທານບໍ່ໄດ້. *{GC 196.2}*

ມີການຂໍໃຫ້ເຈົ້າໜ້າທີ່ຄຣິສຕະຈັກ ແລະ ເຈົ້າໜ້າທີ່ຝ່າຍການປົກຄອງ ອອກມາປາບປາມຂະບວນ-ການທີ່ພວກເຂົາເອີ້ນວ່ານອກຮີດ ແຕ່ກໍບໍ່ໄດ້ຜົນ. ພວກເຂົາຈັບຄົນຂັງຄຸກ, ຈັບທໍລະມານ ແລະ ປະຫານຊີວິດດ້ວຍການເຜົາໄຟ ຫຼື ການຕັດຄໍ ແຕ່ກໍບໍ່ໄດ້ປະໂຫຍດຫຍັງ. ມີຜູ້ເຊື່ອຫຼາຍພັນຄົນຍອມຖືກຂ້າເພາະຄວາມເຊື່ອ; ແຕ່ຢ່າງໃດກໍຕາມ, ຂະບວນການປະຕິຮູບຍັງສືບຕໍ່. ການກົດຂີ່ຂົ່ມເຫັງໄດ້ແຕ່ຊ່ວຍໃນການເຜີຍແຜ່ຫຼັກຄວາມຈິງ ສ່ວນຄວາມຄັ່ງໄຄ້ທີ່ຊາຕານພະຍາຍາມນຳເຂົ້າມາປະປົນກັບງານປະຕິຮູບນັ້ນ ໄດ້ແຕ່ສົ່ງຜົນໃຫ້ຄວາມແຕກຕ່າງລະຫວ່າງວຽກງານຂອງຊາຕານ ແລະ ວຽກງານຂອງພຣະເຈົ້າເຫັນໄດ້ຊັດເຈນຍິ່ງຂຶ້ນ. *{GC 196.3}*

11

ພວກເຈົ້າແຂວງປະທ້ວງ

ສະພາແຫ່ງເມືອງສະປາຍ

ການເປັນພະຍານ ທີ່ສະໜັບສະໜູນຂະບວນການປະຕິຮູບສາສະໜາຄັ້ງໃຫຍ່ທີ່ສະຫງ່າງາມທີ່ສຸດ ຢ່າງໜຶ່ງ ຄືການປະທ້ວງຂອງບັນດາເຈົ້າແຂວງເຢຍລະມັນທີ່ເປັນຄຣິສຕຽນໃນສະພາແຫ່ງເມືອງສະປາຍ (Diet of Spires) ເຊິ່ງຈັດຂຶ້ນໃນປີ 1529. ຄວາມກ້າຫານ, ຄວາມເຊື່ອ ແລະ ຄວາມເດັດດ່ຽວ ຂອງຊາຍເຫຼົ່ານັ້ນທີ່ດຳເນີນຊີວິດເພື່ອພຣະເຈົ້າ ໄດ້ນຳເອົາເສລີພາບທາງຄວາມຄິດ ແລະ ເສລີພາບທາງ ຈິດສຳນຶກໃຫ້ແກ່ຄົນໃນຍຸກສະໄໝຕໍ່ ໆ ກັນມາ. ການປະທ້ວງຂອງພວກເຂົາກາຍເປັນຊື່ຂອງຄຣິສຕະຈັກ ຝ່າຍຂະບວນການປະຕິຮູບ ເພາະຄຳວ່າ “ໂປຣແຕັສຕັງ” ແປວ່າການປະທ້ວງນັ້ນເອງ; ເນື້ອຫາຂອງ ການປະທ້ວງຂອງພວກເຂົາຄື “ແກ່ນສານແທ້ຂອງນິກາຍໂປຣແຕັສຕັງ.”[1] *{GC 197.1}*

ວັນແຫ່ງຄວາມມືດມົນ ແລະ ໄພຄຸກຄາມໄດ້ມາເຖິງຂະບວນການປະຕິຮູບ. ເຖິງແມ່ນວ່າຄຳປະກາດ ຈາກສະພາແຫ່ງເມືອງເວີມໄດ້ລະບຸວ່າລູເທີເປັນບຸກຄົນຕ້ອງຫ້າມ ແລະ ບໍ່ອະນຸຍາດໃຫ້ຜູ້ໃດຮັບເຊື່ອ ຫຼື ນຳຄຳສອນຂອງເພິ່ນໄປເຜີຍແຜ່, ແຕ່ກໍຍັງພໍມີການຍອມຮັບຄວາມແຕກຕ່າງທາງສາສະໜາໃນອານາຈັກ ເຢຍລະມັນຢູ່. ພຣະເຈົ້າຊົງຢັບຢັ້ງອຳນາດທັງຫຼາຍທີ່ຕໍ່ຕ້ານຂະບວນການປະກາດຄວາມຈິງ. ຈັກກະພັດ ຊານສ໌ທີ 5 ຕັ້ງໜ້າຕັ້ງຕາເພື່ອທຳລາຍຂະບວນການປະຕິຮູບ, ແຕ່ທຸກຄັ້ງທີ່ເພິ່ນລະດົມກຳລັງເພື່ອ ທຳລາຍຝ່າຍປະຕິຮູບ ກໍມີເຫດການແຊກເຂົ້າມາ ເຮັດໃຫ້ເຈດຕະນາຮ້າຍຂອງເພິ່ນລົ້ມເຫຼວ. ຫຼາຍຕໍ່ ຫຼາຍຄັ້ງເບິ່ງຄືວ່າ ທຸກຄົນທີ່ກ້າຕໍ່ຕ້ານຄຣິສຕະຈັກໂຣມກຳຈະຕ້ອງພິນາດທັນທີ, ແຕ່ໃນເວລາວິກິດດັ່ງກ່າວ ກໍມັກຈະມີເຫດການເກີດຂຶ້ນເຊັ່ນ: ກອງທັບຊາວເທີກ (Turk) ກຳປາກົດຢູ່ຊາຍແດນຕາເວັນອອກ, ຫຼື ກະສັດຝຣັ່ງ ຫຼື ແມ່ນແຕ່ສັນຕະປາປາເອງ ກຳຈະເກີດຄວາມອິດສາຈັກກະພັດທີ່ມີອຳນາດບາລະມີເພີ່ມ ຂຶ້ນ ແລ້ວຈຶ່ງຫັນໄປເຮັດສົງຄາມກັບຈັກກະພັດ; ສະນັ້ນ, ຂະບວນການປະຕິຮູບສາສະໜາຈຶ່ງມີໂອກາດ ເຕີບໂຕຂະຫຍາຍທ່າມກາງຄວາມວຸ້ນວາຍຂອງຊົນຊາດທັງຫຼາຍ. *{GC 197.2}*

ຢ່າງໃດກໍຕາມ, ໃນທີ່ສຸດບັນດາຜູ້ປົກຄອງຝ່າຍກາໂຕລິກ[2] ໄດ້ຍຸຕິຄວາມຂັດແຍ້ງເພື່ອຮວມຕົວກັນ ຕໍ່ສູ້ຝ່າຍນັກປະຕິຮູບ. ສະພາແຫ່ງເມືອງສະປາຍທີ່ຈັດຂຶ້ນໃນປີ 1526 ໄດ້ໃຫ້ແຕ່ລະແຂວງໃນອານາຈັກ ເຢຍລະມັນມີສິດເສລີພາບໃນເລື່ອງສາສະໜາຢ່າງເຕັມທີ່ ຈົນກວ່າຈະມີການປະຊຸມສະພາຄຣິສຕະຈັກ ທົ່ວໄປ. ແຕ່ການຜ່ອນຜັນນັ້ນເກີດຂຶ້ນໄດ້ກໍຍ້ອນໄພຄຸກຄາມທີ່ກຳລັງບີບຢູ່ໃນເວລານັ້ນ; ທັນທີທີ່ໄພ ຄຸກຄາມດັ່ງກ່າວຜ່ານພົ້ນໄປ, ຈັກກະພັດກໍໄດ້ອອກຣາຊໂອງການໃຫ້ຈັດສະພາຂຶ້ນເປັນຄັ້ງທີສອງທີ່ ເມືອງສະປາຍໃນປີ 1529 ໂດຍມີຈຸດປະສົງເພື່ອທຳລາຍຂະບວນການນອກຣີດ. ຖ້າເປັນໄປໄດ້, ຈະ

[1] ໂດບິນເຍ (D’Aubigné), ເຫຼັ້ມ 13, ບົດ 6.

[2] ໝາຍເຖິງ ຈັກກະພັດຊານສ໌ທີ 5, ກະສັດຟຣານຊິສທີ 1 ແຫ່ງປະເທດຝຣັ່ງ ແລະ ສັນຕະປາປາ. ຄວາມຂັດແຍ້ງລະຫວ່າງ ຜູ້ປົກຄອງທັ້ງສາມນີ້ເອງ ໄດ້ເປັນເຫດໃຫ້ຂະບວນການປະຕິຮູບມີເວລາເຕີບໂຕມາຈົນຮອດເວລານັ້ນ.

ໃຊ້ວິທີການທີ່ນີ້ມນອນ ເພື່ອຊັກຈູງພວກເຈົ້າແຂວງໃຫ້ຕໍ່ຕ້ານຂະບວນການປະຕິຮູບ, ແຕ່ຖ້າພວກເຂົາບໍ່ຍອມ, ຈັກກະພັດຊານສ໌ພ້ອມທີ່ຈະຊັກດາບອອກມາບັງຄັບພວກເຂົາ. {GC 197.3}

ພວກທີ່ຢູ່ຝ່າຍສັນຕະປາປາພາກັນດີອົກດີໃຈ ແລະ ເດີນທາງໄປເມືອງສະປາຍເປັນຈຳນວນຫຼວງຫຼາຍ ທັງສະແດງຄວາມກຽດຊັງຢ່າງເປີດເຜີຍຕໍ່ພວກນັກປະຕິຮູບ ແລະ ຕໍ່ທຸກຄົນທີ່ເຫັນດ້ວຍກັບພວກເຂົາ. ເມລັງໂທນກ່າວວ່າ: “ເຮົາເປັນທີ່ສາບແຊ່ງ ແລະ ເປັນເສດຂີ້ເຫຍື້ອຂອງໂລກ, ແຕ່ພຣະຄຣິສຈະທອດພຣະເນດມາຍັງປະຊາກອນຜູ້ຕ່ຳຕ້ອຍຂອງພຣະອົງ ແລະ ຈະຊົງຄຸ້ມຄອງຮັກສາພວກເຂົາ.”[3] ບັນດາເຈົ້າແຂວງທີ່ຮັບເຊື່ອໃນຂ່າວປະເສີດ ທີ່ເດີນທາງເພື່ອເຂົ້າຮ່ວມສະພານັ້ນ ຖືກຫ້າມບໍ່ໃຫ້ມີການເທດສະໜາປະກາດຂ່າວປະເສີດທີ່ເຮືອນພັກຂອງພວກເຂົາ. ແຕ່ຊາວເມືອງສະປາຍຫິວກະຫາຍພຣະຄຳຂອງພຣະເຈົ້າ ແລະ ເຖິງແມ່ນວ່າມີຂໍ້ຫ້າມກໍຕາມ ມີຫຼາຍພັນຄົນພາກັນໄປຮ່ວມປະຊຸມທີ່ໂບດຂອງເຈົ້າແຂວງແຊັກຊັນນີ. {GC 198.1}

ເຫດການນີ້ໄດ້ເລັ່ງລັດວິກິດການໃຫ້ມາເຖິງໄວຂຶ້ນ. ມີຣາຊໂອງການປະກາດໃຫ້ສະພາຮັບຊາບວ່າ ມະຕິສະພາທີ່ໃຫ້ເສລີພາບທາງຈິດສຳນຶກເປັນເຫດໃຫ້ເກີດຄວາມວຸ້ນວາຍຢ່າງໜັກໜ່ວງ, ຈັກກະພັດຈຶ່ງຕ້ອງການໃຫ້ຍົກເລີກມະຕິດັ່ງກ່າວ. ການປະກາດຕາມອຳເພີໃຈນີ້ເຮັດໃຫ້ຄຣິສຕຽນຝ່າຍຂ່າວປະເສີດຕົກໃຈ ແລະ ໂມໂຫ. ມີຄົນໜຶ່ງກ່າວວ່າ: “ພຣະຄຣິສໄດ້ຕົກຢູ່ໃນມືຂອງກາຍະຟາ ແລະ ປີລາດອີກແລ້ວ.” ຝ່າຍພວກຄຣິສຕະຈັກໂຣມໃຊ້ຄວາມຮຸນແຮງໜັກຂຶ້ນຕາມລຳດັບ. ມີຜູ້ນິຍົມສັນຕະປາປາຄົນໜຶ່ງກ່າວໂດຍມີອະຄະຕິວ່າ: “ຊາວເທີກດີກວ່າພັກພວກລູເທີ ເພາະຊາວເທີກຖືສິນອົດອາຫານ ແຕ່ພັກພວກຂອງລູເທີບໍ່ໄດ້ຖື. ຖ້າພວກເຮົາຕ້ອງເລືອກລະຫວ່າງພຣະທຳຄຳພີຂອງພຣະເຈົ້າ ແລະ ຄວາມເຊື່ອຖືຜິດໆທີ່ຄຣິສຕະຈັກສອນເປັນເວລາດົນນານ, ພວກເຮົາຄວນປະຕິເສດພຣະຄຳພີ.” ເມລັງໂທນກ່າວວ່າ: “ທຸກມື້ທຸກວັນ ທ່ານ ເຟເບີ ເໝືອນຈັບເອົາກ້ອນຫີນໃໝ່ຂຶ້ນມາຕໍ່ໜ້າປະຊຸມສະພາ ແລ້ວແກວ່ງໃສ່ພວກເຮົາທີ່ເຊື່ອໃນຂ່າວປະເສີດ.”[4] {GC 198.2}

ໃນເມື່ອກົດໝາຍຍອມໃຫ້ມີຄວາມແຕກຕ່າງໃນການນັບຖືສາສະໜາ, ບັນດາແຂວງທີ່ເຂົ້າຂ້າງຂ່າວປະເສີດຕັ້ງໝັ້ນຕໍ່ຕ້ານການລະເມີດສິດທິຂອງຕົນ. ຄຳປະກາດຂອງສະພາແຫ່ງເມືອງເວີມທີ່ໃຫ້ລູເທີເປັນບຸກຄົນຕ້ອງຫ້າມນັ້ນ ເປັນເຫດໃຫ້ເພິ່ນບໍ່ສາມາດເຂົ້າຮ່ວມປະຊຸມທີ່ເມືອງສະປາຍໄດ້, ແຕ່ມີຄົນເຮັດໜ້າທີ່ແທນ ກໍຄືພວກເພື່ອນຮ່ວມງານ ແລະ ພວກເຈົ້າແຂວງທີ່ພຣະເຈົ້າຊົງຮຽກເອີ້ນເພື່ອປົກປ້ອງຂະບວນການປະກາດຂອງພຣະອົງໃນວິກິດການຄັ້ງນີ້. ທ່ານເຟຣເດີຣິກແຫ່ງແຊັກຊັນນີຜູ້ສູງສັກ ທີ່ເຄີຍຄຸ້ມຄອງລູເທີກ່ອນໜ້ານີ້ ໄດ້ເສຍຊີວິດແລ້ວ, ແຕ່ນ້ອງຊາຍຂອງເພິ່ນຊື່ ຈອນ ໄດ້ມາສືບທອດຕຳແໜ່ງເຈົ້າແຂວງຜູ້ມີສິດເລືອກຈັກກະພັດ[5]. ເຈົ້າແຂວງຈອນໄດ້ຮັບເຊື່ອໃນຄຳສອນຂອງຂະບວນການປະຕິຮູບສາສະໜາດ້ວຍຄວາມຊົ່ມຊື່ນຍິນດີ ແລະ ເຖິງແມ່ນເພິ່ນເປັນຄົນຮັກສັນຕິ ແຕ່ກໍຍັງສະແດງເຖິງຄວາມກະຕືລືລົ້ນ ແລະ ຄວາມກ້າຫານໃນທຸກເລື່ອງທີ່ກ່ຽວຂ້ອງກັບຄວາມເຊື່ອ. {GC 198.3}

ພວກບາດຫຼວງຮຽກຮ້ອງບັນດາແຂວງທີ່ຮັບເອົາຂະບວນການປະຕິຮູບໃຫ້ຍອມຈຳນົນຕໍ່ການປົກຄອງຂອງຄຣິສຕະຈັກໂຣມໂດຍດີ. ແຕ່ພວກນັກປະຕິຮູບຢືນຢັດເຖິງເສລີພາບທີ່ເຄີຍໄດ້ຮັບ. ພວກເຂົາບໍ່ສາມາດຍອມຮັບໃຫ້ບັນດາແຂວງທີ່ຮັບເອົາພຣະຄຳຂອງພຣະເຈົ້າດ້ວຍຄວາມຊົ່ມຊື່ນຍິນດີ ຕ້ອງຕົກຢູ່ພາຍໃຕ້ການຄອບງຳຂອງຄຣິສຕະຈັກໂຣມອີກ. {GC 199.1}

---

[3] ໂດບິນເຍ, ເຫຼັ້ມ 13, ບົດ 5.

[4] ໂດບິນເຍ, ເຫຼັ້ມ 13, ບົດ 5.

[5] ການສືບທອດນີ້ເກີດຂຶ້ນໃນປີ 1525 ເມື່ອທ່ານເຟຣເດີຣິກເສຍຊີວິດ. ໃນອານາຈັກເຢຍລະມັນມີພຽງເຈັດຄົນເທົ່ານັ້ນທີ່ຖືສິດເລືອກຈັກກະພັດ; ນອກຈາກຈັກກະພັດແລ້ວ, ບໍ່ມີຕຳແໜ່ງໃດຝ່າຍບ້ານເມືອງສູງກວ່ານີ້.

ໃນທີ່ສຸດ ມີການສະເໜີໃຫ້ພົບກັນເຄິ່ງທາງ ໂດຍໃຫ້ປະຕິບັດຕາມຄຳປະກາດຂອງສະພາແຫ່ງ ເມືອງເວີມຢ່າງເຄັ່ງຄັດ ໃນທຸກສະຖານທີ່ທີ່ຂະບວນການປະຕິຮູບນັ້ນຍັງເຂົ້າໄປບໍ່ເຖິງ. ສ່ວນໃນ "ຂົງເຂດ ທີ່ປະຊາຊົນບໍ່ໄດ້ເຮັດຕາມຄຳປະກາດດັ່ງກ່າວ ແລະ ບໍ່ສາມາດປະຕິບັດໄດ້ເພາະຈະເປັນການສ່ຽງທີ່ຈະ ເກີດການກະບົດ, ກໍໃຫ້ປະຕິບັດຕາມນີ້: 1) ຢ່າງໜ້ອຍບໍ່ໃຫ້ມີການປະຕິຮູບໃນເລື່ອງໃໝ່, 2) ຢ່າໃຫ້ ກ່າວເຖິງເລື່ອງທີ່ເປັນປະເດັນຂັດແຍ້ງ, 3) ຢ່າໃຫ້ມີການຕໍ່ຕ້ານການເຮັດພິທີສົມລະນົກຂອງກາໂຕລິກ, ແລະ 4) ຫ້າມບໍ່ໃຫ້ສະມາຊິກຄຣິສຕະຈັກໂຣມັນກາໂຕລິກຮັບເຊື່ອໃນຄະນະນິກາຍລູເທີແຣນ."[6] ມະຕິ ດັ່ງກ່າວໄດ້ຜ່ານສະພາ ເຊິ່ງເຮັດໃຫ້ພວກບາດຫຼວງ ແລະ ພວກຜູ້ນຳຄຣິສຕະຈັກຝ່າຍສັນຕະປາປາ ພໍໃຈເປັນຢ່າງຍິ່ງ. *{GC 199.2}*

ປົກປ້ອງເສລີພາບທາງຄວາມເຊື່ອ

ຖ້າຫາກວ່າມະຕິນີ້ຖືກບັງຄັບໃຊ້ແລ້ວ, "ຂະບວນການປະຕິຮູບຈະບໍ່ສາມາດຂະຫຍາຍໄດ້ . . . ໃນ ເຂດທີ່ຍັງບໍ່ມີໃຜຮູ້, ແລະໃນຂະນະດຽວກັນກໍບໍ່ສາມາດສົ່ງເສີມຮາກຖານໃຫ້ແຂງແຮງໃນສະຖານທີ່ . . . ທີ່ຮັບເຊື່ອຢູ່ແລ້ວ."[7] ຈະມີການຫ້າມບໍ່ໃຫ້ມີສິດເສລີພາບໃນການປາກເວົ້າ ແລະ ຈະບໍ່ໃຫ້ມີການ ຮັບເຊື່ອໃໝ່. ມີການຮຽກຮ້ອງໃຫ້ຄົນທີ່ສະໜັບສະໜູນຂະບວນການປະຕິຮູບຮັບເອົາຂໍ້ຫ້າມດັ່ງກ່າວ ທັນທີ. ຄວາມຫວັງຂອງໂລກເບິ່ງຄືໃກ້ຈະດັບມອດໄປ. "ຖ້າຈະໃຫ້ລະບອບສັນຕະປາປາກັບມາມີ ອຳນາດ . . . ກໍຈະນຳໃຫ້ການກົດຂີ່ຂົ່ມເຫັງທີ່ເຄີຍປະຕິບັດກັນມາຕັ້ງແຕ່ສະໄໝບູຮານກັບຄືນມາຢ່າງ ແນ່ນອນ" ແລະຈະເປັນການເປີດໂອກາດໃຫ້ "ມີການທຳລາຍຂະບວນການປະຕິຮູບໃຫ້ໝົດສິ້ນ ເຊິ່ງ ຢູ່ໃນສະພາບທີ່ຖືກສັ່ນສະເທືອນຢ່າງຮຸນແຮງຢູ່ແລ້ວ" ຍ້ອນຄວາມຄັ່ງໄຄ້ຢ່າງງົມງວາຍ ແລະ ຄວາມ ຂັດແຍ້ງ.[8] *{GC 199.3}*

ໃນຂະນະທີ່ຝ່າຍທີ່ເຊື່ອໃນຂ່າວປະເສີດພົບກັນເພື່ອຫາລື ຕ່າງຄົນຕ່າງເບິ່ງໜ້າກັນດ້ວຍຄວາມທໍ້ ໃຈ ແລ້ວຖາມກັນວ່າ: "ພວກເຮົາຄວນເຮັດແນວໃດ?" ມີປະເດັນສຳຄັນທີ່ມີຜົນກະທົບຢ່າງຍິ່ງຕໍ່ໂລກຢູ່ ຕໍ່ໜ້າພວກເຂົາໃນເວລານັ້ນ. "ຄວນໃຫ້ບັນດາຜູ້ນຳຂະບວນການປະຕິຮູບຍອມຮັບເອົາຄຳປະກາດຂອງ ສະພາຫຼືບໍ່? ໃນວິກິດການທີ່ໜັກໜ່ວງທີ່ສຸດເຊັ່ນນີ້ ຄົງບໍ່ຍາກຖ້າຫາກພວກນັກປະຕິຮູບໄດ້ຫາລືກັນ ດ້ວຍເຫດ ແລະ ຜົນ ຈົນເລືອກທາງຜິດພາດ! ຄົງບໍ່ຍາກຖ້າພວກເຂົາຈະຫາເຫດຜົນ ແລະ ຂໍ້ແກ້ ຕົວທີ່ໜ້າຟັງ ເພື່ອສະໜັບສະໜູນການຍອມຈຳນົນຕໍ່ຄຣິສຕະຈັກໂຣມ! ພວກເຈົ້າແຂວງຝ່າຍຄະນະ ລູເທີແຣນໄດ້ຮັບຄຳຢືນຢັນວ່າ ຕົນຈະມີສິດເສລີພາບທາງຄວາມເຊື່ອຖືໃນສາສະໜາ ແລະ ພົນລະເມືອງ ຂອງພວກເຂົາທີ່ຮັບເຊື່ອໃນຄຳສອນຂອງຂະບວນການປະຕິຮູບກ່ອນທີ່ມະຕິດັ່ງກ່າວຜ່ານສະພາ ກໍຈະໄດ້ ຮັບສິດທິດັ່ງກ່າວເຊັ່ນກັນ. ພວກເຈົ້າແຂວງຄວນພໍໃຈກັບສິ່ງເຫຼົ່ານີ້ຫຼືບໍ່? ຖ້າພຽງແຕ່ຍອມຈຳນົນ ກໍຈະ ສາມາດຫຼີກລ່ຽງອັນຕະລາຍຫຼາຍຢ່າງ! ແຕ່ຖ້າຂັດຂືນຕໍ່ຕ້ານ ກໍຄົງຕ້ອງປະສົບພົບພໍ້ກັບໄພອັນຕະລາຍ ແລະ ຄວາມຂັດແຍ້ງຫຼາຍຢ່າງທີ່ຍັງບໍ່ຮູ້ຈັກ! ໃຜຈະຮູ້ໄດ້ວ່າໃນອະນາຄົດຂ້າງໜ້າຈະມີໂອກາດຫຍັງ ແດ່? ຂໍໃຫ້ພວກເຮົາຢຶດເອົາກິ່ງໝາກກອກແຫ່ງສັນຕິພາບທີ່ຄຣິສຕະຈັກໂຣມຍື່ນໃຫ້ນັ້ນ ແລະ ປິ່ນປົວ ບາດແຜໃຫ້ກັບອານາຈັກເຢຍລະມັນ. ເປັນໄປໄດ້ທີ່ພວກນັກປະຕິຮູບອາດຈະໃຊ້ເຫດຜົນເຊັ່ນນີ້ ເພື່ອ ສະໜັບສະໜູນການຮັບເອົາແນວປະຕິບັດທີ່ຈະນຳໄປສູ່ການທຳລາຍຂະບວນການຂອງພວກເຂົາໃນບໍ່ຊ້າ ຢ່າງແນ່ນອນ." *{GC 199.4}*

---

[6] ໂດບິນເຍ, ເຫຼັ້ມ 13, ບົດ 5.

[7] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 5.

[8] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 5.

“ດີແທ້ທີ່ພວກເຂົາໄດ້ເບິ່ງເຫັນຫຼັກການເບື້ອງຫຼັງຂໍ້ສະເໜີນີ້ ແລະ ໄດ້ປະຕິບັດດ້ວຍຄວາມເຊື່ອ. ຫຼັກການທີ່ວ່ານັ້ນແມ່ນຫຍັງ? ແມ່ນການຍອມຮັບວ່າ ຄຣິສຕະຈັກໂຣມມີສິດໃນການບັງຄັບຈິດສຳນຶກຜິດຊອບ ແລະ ມີສິດໃນການຫ້າມບໍ່ໃຫ້ມີການສຶກສາຄົ້ນຄວ້າຢ່າງເສລີ. ແລ້ວພວກເຈົ້າແຂວງເອງ ກັບພົນລະເມືອງໂປຣແຕັສຕັງຂອງພວກເຂົາຈະໄດ້ເສລີພາບໃນການນັບຖືສາສະໜາບໍ່ແມ່ນບໍ? ແມ່ນແລ້ວ, ແຕ່ການໄດ້ເສລີພາບທາງສາສະໜາໃນຂໍ້ຕົກລົງດັ່ງກ່າວ ບໍ່ແມ່ນຍ້ອນວ່າເປັນສິດທິ ແຕ່ເປັນການອະນຸຍາດໃນກໍລະນີພິເສດ. ສ່ວນຄົນທັງຫຼາຍທີ່ຢູ່ນອກເໜືອຂໍ້ສະເໜີນີ້ ກໍຕ້ອງຂຶ້ນກັບອຳນາດຂອງຄຣິສຕະຈັກ ໂດຍຈະບໍ່ມີການພິຈາລະນາໃນເລື່ອງຈິດສຳນຶກຜິດຊອບ, ຄຣິສຕະຈັກໂຣມເປັນຜູ້ຕັດສິນຢ່າງບໍ່ມີຄວາມຜິດພາດ ແລະ ທຸກຄົນຕ້ອງເຊື່ອຟັງ. ຖ້າພວກເຂົາຍອມຮັບຂໍ້ສະເໜີດັ່ງກ່າວ ກໍເທົ່າກັບເປັນການຍອມຮັບວ່າ ເສລີພາບໃນການນັບຖືສາສະໜານັ້ນ ຄວນຖືກຈຳກັດຢູ່ໃນແຂວງແຊັກຊັນນີທີ່ປະຕິຮູບແລ້ວເທົ່ານັ້ນ, ສ່ວນອານາເຂດອື່ນທົ່ວທຸກປະເທດທີ່ມີການນັບຖືສາສະໜາຄຣິສ ການສຶກສາຄົ້ນຄວ້າຢ່າງເສລີ ແລະ ການເຊື່ອຖືຕາມຄຳສອນຂອງຂະບວນການປະຕິຮູບແມ່ນຜິດກົດໝາຍ ແລະ ຈະຕ້ອງໄດ້ຮັບການລົງໂທດດ້ວຍການຂັງຄຸກ ຫຼື ປະຫານດ້ວຍການເຜົາໄຟ. ພວກເຈົ້າແຂວງຈະຍອມຈຳກັດເສລີພາບໃນການນັບຖືສາສະໜາສະເພາະໃນບາງພື້ນທີ່ເທົ່ານັ້ນບໍ? ຈະຍອມປະກາດວ່າ ຄົນສຸດທ້າຍໄດ້ຮັບເຊື່ອໃນຂະບວນການປະຕິຮູບແລ້ວຢ່າງນັ້ນບໍ? ຈະສາມາດຍອມຮັບວ່າ ການປະກາດຂ່າວປະເສີດຈະບໍ່ມີການຂະຫຍາຍເພີ່ມເຕີມໄດ້ບໍ? ຫຼື ຈະຍອມຮັບໄດ້ຢ່າງໃດວ່າ ອານາເຂດທີ່ຄຣິສຕະຈັກໂຣມຄອບຄອງໃນຂະນະນັ້ນກໍຈະຄອບຄອງຕະຫຼອດໄປ? ພວກນັກປະຕິຮູບຈະສາມາດອ້າງໄດ້ຫຼືບໍ່ວ່າ ຕົນບໍ່ມີຄວາມຜິດ ໃນເມື່ອຂໍ້ສະເໜີນີ້ຈະເປັນເຫດໃຫ້ຫຼາຍຮ້ອຍຫຼາຍພັນຄົນຕ້ອງເສຍຊີວິດໃນດິນແດນທີ່ປົກຄອງດ້ວຍລະບອບສັນຕະປາປາ? ຖ້າພວກເຂົາຍອມຮັບຂໍ້ສະເໜີໃນເວລາທີ່ຄັບຂັນເຊັ່ນນີ້ ກໍຈະເປັນການທໍລະຍົດຕໍ່ພາລະກິດຂອງຂ່າວປະເສີດ ແລະ ຕໍ່ເສລີພາບໃນດິນແດນທີ່ມີການນັບຖືສາສະໜາຄຣິສ.”[9] ແຕ່ແທນທີ່ຈະເຮັດຢ່າງນັ້ນ ພວກເຈົ້າແຂວງຍິນດີ “ສະຫຼະທຸກສິ່ງ ແມ່ນແຕ່ອານາເຂດການປົກຄອງ, ມົງກຸດປະຈຳຕຳແໜ່ງ ແລະ ຊີວິດຂອງພວກເຂົາເອງ.”[10] {GC 200.1}

ພວກເຈົ້າແຂວງຝ່າຍການປະຕິຮູບກ່າວວ່າ: “ຂໍໃຫ້ພວກເຮົາປະຕິເສດຄຳສັ່ງນີ້, ເພາະໃນເລື່ອງທີ່ກ່ຽວຂ້ອງກັບຈິດສຳນຶກຜິດຊອບນັ້ນ ສຽງສ່ວນຫຼາຍບໍ່ມີອຳນາດ.” ບັນດາຜູ້ແທນຈຶ່ງໃຫ້ຖະແຫຼງການວ່າ: “ທີ່ອານາຈັກຂອງພວກເຮົາມີຄວາມສະຫງົບສຸກ ແມ່ນຍ້ອນຄຳປະກາດໃນປີ 1526 ນັ້ນເອງ; ຖ້າຍົກເລີກຄຳປະກາດດັ່ງກ່າວແລ້ວ ຈະເຮັດໃຫ້ເຢຍລະມັນເຕັມໄປດ້ວຍຄວາມວຸ້ນວາຍ ແລະ ການແຕກແຍກ. ສະພາແຫ່ງຊາດບໍ່ສາມາດເຮັດສິ່ງໃດໄດ້ ນອກຈາກການຮັກສາເສລີພາບໃນການນັບຖືສາສະໜາ ຈົນກວ່າຈະມີປະຊຸມສະພາຄຣິສຕະຈັກ.”[11] ລັດມີໜ້າທີ່ໃນການປົກປ້ອງເສລີພາບທາງຈິດສຳນຶກ ແລະ ນີ້ແມ່ນຂອບເຂດຂອງອຳນາດໃນເລື່ອງສາສະໜາ. ທຸກຄັ້ງທີ່ມີອຳນາດລັດແຫ່ງໃດທີ່ພະຍາຍາມຄວບຄຸມ ຫຼື ບັງຄັບການປະຕິບັດທາງສາສະໜາ ກໍເປັນການສູນເສຍຫຼັກການພື້ນຖານທີ່ເຫຼົ່າຄຣິສຕຸງນຝ່າຍຂ່າວປະເສີດໄດ້ຕໍ່ສູ້ຢ່າງພິລະອາດຫານເພື່ອໃຫ້ໄດ້ມາ. {GC 201.1}

ພວກຝ່າຍສັນຕະປາປາຕັ້ງໜ້າຕັ້ງຕາເພື່ອປາບປາມສິ່ງທີ່ພວກເຂົາເອີ້ນວ່າ “ຄວາມດື້ດ້ານທີ່ບໍ່ຢ້ານຕາຍ.” ພວກເຂົາເລີ່ມຕົ້ນດ້ວຍການພະຍາຍາມສ້າງຄວາມແຕກແຍກລະຫວ່າງພວກທີ່ສະໜັບສະໜູນຂະບວນການປະຕິຮູບ; ນອກຈາກນີ້, ກໍຍັງຂົ່ມຂູ່ທຸກຄົນທີ່ຍັງບໍ່ໄດ້ປະກາດຈຸດຢືນເຂົ້າຂ້າງຂະບວນການ

[9] ໄວລີ (Wylie), ເຫຼັ້ມ 9, ບົດ 15.
[10] ໂດບິນເຍ, ເຫຼັ້ມ 13, ບົດ 5.
[11] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 5.

ດັ່ງກ່າວຢ່າງເປີດເຜີຍ. ໃນທີ່ສຸດ ພວກຕົວແທນຈາກບັນດາເມືອງເສລີທີ່ບໍ່ໄດ້ຂຶ້ນກັບເຈົ້າແຂວງຄົນໃດ ຖືກເອີ້ນມາລາຍງານຕົວຕໍ່ໜ້າສະພາ ໂດຍໃຫ້ພວກເຂົາປະກາດວ່າຈະຍອມຮັບເງື່ອນໄຂຂອງຂໍ້ສະເໜີຫຼືບໍ່. ພວກເຂົາຂໍເວລາເພີ່ມ, ແຕ່ກໍບໍ່ໄດ້ຮັບອະນຸຍາດ. ເມື່ອເຫດການທົດສອບຈິດໃຈມາເຖິງ ມີຕົວແທນເກືອບເຄິ່ງໜຶ່ງເຂົ້າຂ້າງພວກນັກປະຕິຮູບ. ຄົນເຫຼົ່ານັ້ນທີ່ບໍ່ຍອມສະຫຼະເສລີພາບທາງຈິດສຳນຶກ ແລະ ສິດໃນການຄິດຕັດສິນດ້ວຍຕົວເອງ ຮູ້ດີວ່າຈຸດຢືນຂອງຕົນເຮັດໃຫ້ຕົວເອງຕົກເປັນເປົ້າສຳລັບການຕຳໜິຕິຕຽນ, ການຖືກກ່າວໂທດ ແລະ ການກົດຂີ່ຂົ່ມເຫັງໃນອະນາຄົດ. ມີຕົວແທນຄົນໜຶ່ງກ່າວວ່າ: “ພວກເຮົາຕ້ອງປະຕິເສດພຣະຄຳຂອງພຣະເຈົ້າ ຫຼື ຖືກປະຫານຊີວິດດ້ວຍການເຜົາໄຟ.”[12] *{GC 201.2}*

ພວກເຈົ້າແຂວງຍືນຢັດ

ກະສັດເຟີດິນັນເປັນຕົວແທນຂອງຈັກກະພັດທີ່ປະຊຸມສະພາ; ເພິ່ນເຫັນວ່າ ຄຳປະກາດນັ້ນຈະສ້າງຄວາມແຕກແຍກຢ່າງໃຫຍ່ຫຼວງ ຖ້າບໍ່ສາມາດໂນ້ມນ້າວພວກເຈົ້າແຂວງໃຫ້ຍອມຮັບ ແລະ ປະຕິບັດຕາມ. ເພິ່ນຈຶ່ງລອງໃຊ້ກົນລະຍຸດໃນການຊັກຈູງ ເພາະຮູ້ດີວ່າຖ້າຈະໃຊ້ກຳລັງກັບຄົນເຫຼົ່ານີ້ ຈະເຮັດໃຫ້ພວກເຂົາຍິ່ງຕັ້ງໃຈຂັດຂືນຫຼາຍຂຶ້ນ. ເພິ່ນ “ຂໍຮ້ອງພວກເຈົ້າແຂວງໃຫ້ຍອມຮັບເອົາຄຳປະກາດດັ່ງກ່າວ ໂດຍຢືນຢັນວ່າຈັກກະພັດຈະພໍໃຈກັບພວກເຂົາຫຼາຍທີ່ສຸດ.” ແຕ່ຊາຍທີ່ສັດຊື່ເຫຼົ່ານີ້ໄດ້ຍອມຮັບເອົາອຳນາດທີ່ສູງກວ່າອຳນາດການປົກຄອງໃດ ໆ ໃນໂລກ, ຈຶ່ງຕອບດ້ວຍຄວາມສະຫງົບສຸຂຸມວ່າ: “ພວກເຮົາຈະປະຕິບັດຕາມຄຳສັ່ງຂອງຈັກກະພັດໃນທຸກເລື່ອງທີ່ຊ່ວຍຮັກສາຄວາມສະຫງົບສຸກ ແລະ ເປັນທີ່ຖວາຍກຽດແດ່ພຣະເຈົ້າ.”[13] *{GC 201.3}*

ໃນທີ່ສຸດ ກະສັດເຟີດິນັນໄດ້ປະກາດແກ່ເຈົ້າແຂວງຈອນ ກັບພັກພວກຕໍ່ໜ້າສະພາທັງໝົດວ່າ ຄຳປະກາດດັ່ງກ່າວ “ກຳລັງຈະຖືກຮ່າງໃນຮູບແບບຣາຊໂອງການ. . . . ພວກເຂົາເຫຼືອທາງດຽວເທົ່ານັ້ນ ຄືຕ້ອງຍອມຕໍ່ສຽງສ່ວນຫຼາຍ.” ພໍກ່າວຢ່າງນີ້ແລ້ວ ເພິ່ນກໍຍ່າງອອກຈາກປະຊຸມ ບໍ່ໃຫ້ໂອກາດຝ່າຍປະຕິຮູບໄດ້ອະພິປາຍ ຫຼື ຕອບໂຕ້ແຕ່ຢ່າງໃດ. “ພວກເຂົາສົ່ງຕົວແທນໄປຂໍຮ້ອງໃຫ້ກະສັດກັບເຂົ້າປະຊຸມ ແຕ່ກໍບໍ່ມີປະໂຫຍດ.” ເພິ່ນໄດ້ແຕ່ຕອບການປະທ້ວງຂອງພວກເຂົາວ່າ: “ເລື່ອງມັນຈົບແລ້ວ, ເຫຼືອແຕ່ໃຫ້ຍອມຈຳນົນ.”[14] *{GC 202.1}*

ຝ່າຍຈັກກະພັດແນ່ໃຈວ່າ ພວກເຈົ້າແຂວງຄຣິສຕຽນຈະຢຶດພຣະຄຳພີໄວ້ເໜືອຄຳສອນ ແລະ ຂໍ້ຮຽກຮ້ອງຂອງມະນຸດ; ແລະຮູ້ອີກວ່າທີ່ໃດມີການເຊື່ອຖືໃນພຣະຄຳພີເຊັ່ນນີ້ ລະບອບສັນຕະປາປາກໍຈະຖືກລົ້ມລ້າງໃນທີ່ສຸດ. ແຕ່ພວກເຂົາບໍ່ຕ່າງຫຍັງກັບຄົນນັບໝື່ນນັບແສນທີ່ມີຊີວິດຢູ່ຫຼັງສະໄໝນັ້ນ ທີ່ “ປັກໃຈໃສ່ໃນສິ່ງທີ່ຕາເຫັນຢູ່.” (2 ໂກຣິນໂທ 4:18). ພວກເຂົາຫຼົງຕົວເອງວ່າ ຈຸດຢືນຂອງຈັກກະພັດ ແລະ ສັນຕະປາປາເຂັ້ມແຂງ ໃນຂະນະທີ່ຈຸດຢືນຂອງຝ່າຍນັກປະຕິຮູບນັ້ນອ່ອນແອ. ຖ້າຫາກພວກນັກປະຕິຮູບໄດ້ເພິ່ງພາຄວາມຊ່ວຍເຫຼືອຂອງມະນຸດເທົ່ານັ້ນ, ພວກເຂົາຄົງອ່ອນແອເໝືອນທີ່ພວກຝ່າຍສັນຕະປາປາຄິດ. ຢ່າງໃດກໍຕາມ, ເຖິງແມ່ນວ່າພວກເຂົາມີຄົນຈຳນວນໜ້ອຍ ແລະ ກຳລັງຂັດແຍ້ງກັບຄຣິສຕະຈັກໂຣມຢູ່, ແຕ່ກໍຍັງມີຄວາມເຂັ້ມແຂງ. ພວກເຂົາປະຕິເສດລາຍງານຂອງສະພາເພື່ອໄປຫາຄຳຕອບໃນພຣະຄຳຂອງພຣະເຈົ້າ ແລະ ຫັນໄປຈາກຈັກກະພັດຊານສ໌ໄປອຸທອນຕໍ່ພຣະເຢຊູຄຣິສ

[12] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 5.
[13] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 5.
[14] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 5.

ຜູ້ຊົງເປັນພຣະມະຫາກະສັດເໜືອກະສັດທັງຫຼາຍ ແລະ ຊົງເປັນອົງພຣະຜູ້ເປັນເຈົ້າເໜືອເຈົ້ານາຍທັງປວງ.[15] {GC 202.2}

ໃນເມື່ອກະສັດເຟີດິນັນ ບໍ່ຍອມເຄົາລົບຕໍ່ຄວາມສຳນຶກຜິດຊອບຂອງພວກເຈົ້າແຂວງ, ພວກເຂົາຈຶ່ງຕັດສິນໃຈທີ່ຈະບໍ່ໃສ່ໃຈທີ່ເພີ່ນບໍ່ໄດ້ເຂົ້າໃນທີ່ປະຊຸມ, ແຕ່ຈະນຳສະເໜີຄຳຄັດຄ້ານຂອງພວກເຂົາຕໍ່ສະພາແຫ່ງຊາດໂດຍບໍ່ຊັກຊ້າ. ດັ່ງນັ້ນ, ພວກເຂົາຈຶ່ງຮ່າງຖະແຫຼງການ ແລະ ນຳສະເໜີຕໍ່ສະພາ, ເຊິ່ງມີເນື້ອໃນວ່າ: {GC 202.3}

“ຂ້າພະເຈົ້າທັງຫຼາຍຢືນຢູ່ຕໍ່ໜ້າພຣະເຈົ້າພຣະຜູ້ສ້າງແຕ່ອົງດຽວ ຜູ້ຊົງຮັກສາ, ຊົງໄຖ່ຊີວິດ ແລະ ຊົງຊ່ວຍຂ້າພະເຈົ້າທັງຫຼາຍໃຫ້ລອດ ຄືພຣະອົງຜູ້ຈະຊົງພິພາກສາພວກຂ້າພະເຈົ້າ, ແລະຢືນຢູ່ຕໍ່ມະນຸດທັງປວງກັບສິ່ງມີຊີວິດທັງສິ້ນ. ພວກຂ້າພະເຈົ້າຂໍຖະແຫຼງການຄັດຄ້ານ ແລະ ແຈ້ງຈຸດຢືນວ່າ ສຳລັບພວກຂ້າພະເຈົ້າເອງ ແລະ ປະຊາຊົນຂອງພວກຂ້າພະເຈົ້າ, ຈະບໍ່ຍອມຮັບ ແລະ ຈະບໍ່ປະຕິບັດຕາມຣາຊໂອງການທີ່ສະເໜີຂຶ້ນໃນເລື່ອງໃດທີ່ຂັດຕໍ່ພຣະເຈົ້າ, ຕໍ່ພຣະຄຳອັນສັກສິດຂອງພຣະອົງ, ຕໍ່ຈິດສຳນຶກຜິດຊອບຂອງພວກຂ້າພະເຈົ້າ ຫຼື ຕໍ່ຄວາມລອດຂອງພວກຂ້າພະເຈົ້າ.” {GC 202.4}

“ຈະໃຫ້ພວກເຮົາຮັບຮອງຣາຊໂອງການນີ້ບໍ? ເມື່ອພຣະເຈົ້າຊົງຮຽກເອີ້ນມະນຸດຄົນໃດໃຫ້ຮັບຮູ້ຄວາມຈິງຂອງພຣະອົງ ແລ້ວຄົນນັ້ນກໍຍັງບໍ່ສາມາດຮັບເອົາຄວາມຈິງດັ່ງກ່າວໄດ້ຢ່າງນັ້ນບໍ?” “ບໍ່ມີຄຳສອນອັນໃດທີ່ແນ່ນອນ ນອກຈາກຄຳສອນທີ່ສອດຄ່ອງກັບພຣະຄຳຂອງພຣະເຈົ້າ. . . . ອົງພຣະຜູ້ເປັນເຈົ້າຊົງຫ້າມບໍ່ໃຫ້ສອນຄຳສອນອື່ນ. . . . ພຣະຄຳພີອັນສັກສິດຄວນໄດ້ຮັບການອະທິບາຍດ້ວຍຂໍ້ພຣະຄຳພີທີ່ແຈ່ມແຈ້ງກວ່າ. . . . ໜັງສືອັນສັກສິດນີ້ອ່ານເຂົ້າໃຈງ່າຍໃນທຸກເລື່ອງທີ່ຈຳເປັນໃນຊີວິດຄຣິສຕຽນ ແລະ ມຸ່ງໝາຍທີ່ຈະກຳຈັດຄວາມມືດອອກໄປ. ພວກຂ້າພະເຈົ້າໝາຍໝັ້ນໂດຍເພິ່ງພຣະຄຸນຂອງພຣະເຈົ້າທີ່ຈະໃຫ້ມີການເທດສະໜາພຣະຄຳຢ່າງດຽວຕໍ່ໄປ ໂດຍຈະບໍ່ໃຫ້ມີການນຳເອົາເລື່ອງອື່ນມາກ່ຽວຂ້ອງ, ຄືຈະໃຫ້ມີການປະກາດສິ່ງທີ່ຢູ່ໃນພຣະຄຳພີເດີມ ແລະ ພຣະຄຳພີໃໝ່ ໂດຍບໍ່ເພີ່ມເລື່ອງອື່ນທີ່ອາດຂັດແຍ້ງກັບຄຳສອນຂອງພຣະຄຳພີ. ມີແຕ່ພຣະຄຳຂອງພຣະເຈົ້າທີ່ເປັນຄວາມຈິງ, ເປັນບັນທັດຖານທີ່ແນ່ນອນຂອງຄຳສອນທຸກຢ່າງ ແລະ ແນວທາງປະຕິບັດແຫ່ງຊີວິດໃນທຸກເລື່ອງ, ພຣະຄຳຈະບໍ່ມີວັນຜິດພາດ ຫຼື ຫຼອກລວງພວກເຮົາ. ຜູ້ໃດສ້າງຊີວິດຂຶ້ນເທິງຮາກຖານນີ້ ຈະສາມາດຢືນຢູ່ຢ່າງໝັ້ນຄົງຕໍ່ອຳນາດທັງຫຼາຍຂອງນະຣົກ ໃນຂະນະທີ່ສິ່ງໄຮ້ສາລະຂອງມະນຸດທັງສິ້ນທີ່ຕໍ່ສູ້ພຣະຄຳພີ ຈະພັງເພລ່ງມາຕໍ່ໜ້າພຣະພັກຂອງພຣະເຈົ້າ.” {GC 203.1}

“ດ້ວຍເຫດນີ້ ພວກຂ້າພະເຈົ້າຈຶ່ງປະຕິເສດແອກທີ່ນຳມາໃຊ້ບັງຄັບພວກຂ້າພະເຈົ້າ.” “ໃນຂະນະດຽວກັນ, ພວກຂ້າພະເຈົ້າຄາດຫວັງໃຫ້ອົງຈັກກະພັດປະຕິບັດຕໍ່ພວກຂ້າພະເຈົ້າໃຫ້ສົມກັບເປັນເຈົ້າຊີວິດຄຣິສຕຽນຜູ້ຮັກພຣະເຈົ້າເໜືອສິ່ງໃດ. ຂ້າພະເຈົ້າທັງຫຼາຍຂໍປະກາດວ່າ ພວກຂ້າພະເຈົ້າພ້ອມທີ່ຈະຖວາຍຄວາມຈົງຮັກພັກດີ ແລະ ການເຊື່ອຟັງໃຫ້ອົງຈັກກະພັດ ແລະ ເຈົ້ານາຍທັງປວງຕາມໜ້າທີ່ອັນເໝາະສົມ ແລະ ສອດຄ່ອງກັບຫຼັກຄຸນນະທຳ.”[16] {GC 203.2}

ຖະແຫຼງການສະບັບນີ້ສ້າງຄວາມສະເທືອນໃຈຢ່າງແຮງຕໍ່ຄົນໃນສະພາ. ຄົນສ່ວນໃຫຍ່ທັງຕົກໃຈ ແລະ ປະຫຼາດໃຈທີ່ເຫັນຄວາມກ້າຫານຂອງຄົນທີ່ຄັດຄ້ານ. ພວກເຂົາເບິ່ງໄປໃນອະນາຄົດ ແລະ ເຫັນແຕ່ພະຍຸທີ່ປັ່ນປ່ວນ ແລະ ຄວາມບໍ່ແນ່ນອນ; ເບິ່ງຄືວ່າຈະຕ້ອງມີການຂັດແຍ້ງ, ການຕໍ່ສູ້ ແລະ ການນອງເລືອດຢ່າງຫຼີກລ່ຽງບໍ່ໄດ້. ແຕ່ຝ່າຍການປະຕິຮູບມີຄວາມໝັ້ນໃຈວ່າ ແນວທາງຂອງພວກເຂົານັ້ນຍຸຕິທຳ; ດ້ວຍ

[15] ເບິ່ງ ໂດບິນເຍ, ເຫຼັ້ມ 13, ບົດ 6.
[16] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 6.

ການເພິ່ງພາໃນພຣະຫັດອັນຊົງຣິດຂອງພຣະເຈົ້າ ພວກເຂົາຈຶ່ງ "ມີຄວາມເດັດດ່ຽວ ແລະ ເຕັມໄປດ້ວຍ ຄວາມກ້າຫານ." *{GC 203.3}*

"ຫຼັກການແຫ່ງການປະທ້ວງທີ່ມີຊື່ສຽງນີ້ . . . ຄືແກ່ນສານສຳຄັນຂອງນິກາຍໂປຣແຕັສຕັງ. ການ ປະທ້ວງດັ່ງກ່າວໄດ້ຄັດຄ້ານຢູ່ໃນສອງປະເດັນທີ່ມະນຸດລ່ວງເກີນໃນເລື່ອງຄວາມເຊື່ອ: ປະເດັນທີໜຶ່ງ ຄື ການລ່ວງເກີນຂອງອຳນາດລັດ; ສ່ວນປະເດັນທີສອງຄື ການໃຊ້ອຳນາດໂດຍພະລະການຂອງ ຄຣິສຕະຈັກ. ແທນການໃຊ້ອຳນາດເກີນຂອບເຂດນັ້ນ ຫຼັກການໂປຣແຕັສຕັງຖືວ່າ ຈິດສຳນຶກຜິດຊອບ ມີອຳນາດເໜືອເຈົ້າໜ້າທີ່ຂອງລັດ ແລະ ພຣະຄຳຂອງພຣະເຈົ້າມີອຳນາດເໜືອຄຣິສຕະຈັກທີ່ເປັນຢູ່ໃນ ໂລກ. ໃນເບື້ອງຕົ້ນ, ຫຼັກການດັ່ງກ່າວບໍ່ຍອມຮັບອຳນາດລັດໃນເລື່ອງທີ່ກ່ຽວຂ້ອງກັບພຣະເຈົ້າ; ແລະໃນ ຂະນະດຽວກັນ, ກໍກ່າວພ້ອມກັບພວກຜູ້ເຜີຍພຣະທຳ ແລະ ພວກອັກຄະສາວົກວ່າ, ພວກຂ້າພະເຈົ້າ '*ຈຳຕ້ອງເຊື່ອຟັງພຣະເຈົ້າຫຼາຍກວ່າມະນຸດ.*' (ກິດຈະການ 5:29). ເມື່ອຢູ່ຕໍ່ໜ້າມົງກຸດຂອງຈັກກະພັດ ຊານສ໌ທີ 5, ຫຼັກການຂອງໂປຣແຕັສຕັງໄດ້ເຊີດຊູມົງກຸດຂອງພຣະເຢຊູຄຣິສ. ບໍ່ພຽງເທົ່ານັ້ນ, ແຕ່ ຄຳສອນຂອງໂປຣແຕັສຕັງໄດ້ວາງຫຼັກການໄວ້ວ່າ ຄຳສອນທຸກຢ່າງຂອງມະນຸດຕ້ອງຢູ່ໃຕ້ພຣະຄຳຂອງ ພຣະເຈົ້າ."[17] ນອກຈາກນັ້ນ, ພວກທີ່ປະທ້ວງຍັງໄດ້ຢືນຢັນສິດທິໃນການປະກາດສິ່ງທີ່ຕົນເຊື່ອວ່າເປັນ ຄວາມຈິງ. ພວກເຂົາຈະບໍ່ພຽງແຕ່ເຊື່ອ ແລະ ປະຕິບັດຕາມພຣະຄຳຂອງພຣະເຈົ້າ ແຕ່ຈະສອນ ດ້ວຍ; ໃນຂະນະດຽວກັນ, ພວກເຂົາປະຕິເສດການອ້າງສິດຂອງພວກບາດຫຼວງ ຫຼື ເຈົ້າໜ້າທີ່ລັດທີ່ຈະ ເຂົ້າແຊກແຊງ. ການປະທ້ວງທີ່ເມືອງສະປາຍ ແມ່ນການຕໍ່ຕ້ານການບໍ່ຍອມຮັບຄວາມແຕກຕ່າງທາງ ສາສະໜາຢ່າງໜັກແໜ້ນ ແລະ ເປັນການຢືນຢັນເຖິງສິດທິຂອງມະນຸດທຸກຄົນໃນການນະມັດສະການ ພຣະເຈົ້າຕາມຈິດສຳນຶກຜິດຊອບຂອງຕົນ. *{GC 203.4}*

ຖ້ອຍຖະແຫຼງດັ່ງກ່າວໄດ້ປະກາດອອກໄປແລ້ວ. ມັນໄດ້ຮັບການບັນທຶກໄວ້ໃນຄວາມຊົງຈຳຂອງຄົນ ນັບໝື່ນນັບແສນ ແລະ ໄດ້ບັນທຶກໄວ້ໃນສະຫວັນໃນບ່ອນທີ່ມະນຸດບໍ່ສາມາດລຶບລ້າງໄດ້. ໃນທຸກຊົງເຂດ ທົ່ວອານາຈັກເຢຍລະມັນທີ່ປະຊາຊົນເຊື່ອໃນຂ່າວປະເສີດ ກໍມີການຮັບເອົາຖ້ອຍຖະແຫຼງປະທ້ວງນີ້ ເປັນ ການສະຫຼຸບຄວາມເຊື່ອຂອງພວກເຂົາ. ຄົນໃນທຸກແຫ່ງຫົນເຫັນວ່າ ຖ້ອຍຖະແຫຼງດັ່ງກ່າວເປັນສັນຍານ ເຖິງຍຸກສະໄໝໃໝ່ທີ່ດີກວ່າ. ມີເຈົ້າແຂວງຄົນໜຶ່ງກ່າວແກ່ພວກໂປຣແຕັສຕັງແຫ່ງເມືອງສະປາຍວ່າ: "ຂໍ ໃຫ້ພຣະເຈົ້າຜູ້ຊົງຣິດທານຸພາບສູງສຸດ ຜູ້ທີ່ໄດ້ປະທານພຣະຄຸນແກ່ທ່ານທັງຫຼາຍ ເພື່ອປະກາດຈຸດຢືນ ຢ່າງກະຕືລືລົ້ນ ແລະ ດ້ວຍໃຈອິດສະຫຼະໂດຍບໍ່ຫວັ່ນໄຫວນັ້ນ ຊົງໂຜດຄຸ້ມຄອງຮັກສາພວກທ່ານ ໃຫ້ ມີຄວາມໝັ້ນຄົງເດັດດ່ຽວຕາມຫຼັກຄຣິສຕຽນຈົນວັນສິ້ນໂລກ."[18] *{GC 204.1}*

ຖ້າຫຼັງຈາກທີ່ໄດ້ຮັບຄວາມສຳເລັດລະດັບໜຶ່ງແລ້ວ ຝ່າຍນັກປະຕິຮູບຍອມລົດມາດຕະຖານລົງ ເພື່ອ ເປັນທີ່ຍອມຮັບຂອງຊາວໂລກ, ກໍຈະເປັນການທໍລະຍົດຕໍ່ພຣະເຈົ້າ ແລະ ຕໍ່ພວກເຂົາເອງ, ທັງ ຈະເປັນເຫດໃຫ້ພັນທະກິດການປະຕິຮູບນັ້ນຖືກທຳລາຍ. ປະສົບການຂອງພວກນັກປະຕິຮູບຜູ້ສູງສົ່ງ ເຫຼົ່ານີ້ ມີບົດຮຽນສຳລັບຄົນໃນທຸກຍຸກທຸກສະໄໝສືບເນື່ອງກັນມາ. ວິທີການຂອງຊາຕານໃນການຕໍ່ສູ້ ພຣະເຈົ້າ ແລະ ພຣະຄຳຂອງພຣະອົງບໍ່ໄດ້ປ່ຽນແປງ; ມັນຍັງຕໍ່ຕ້ານການຮັບເອົາພຣະຄຳພີມາເປັນ ແນວທາງໃນການດຳເນີນຊີວິດເໝືອນໃນສະຕະວັດທີ 16. ໃນສະໄໝຂອງເຮົາຄົນສ່ວນໃຫຍ່ໄດ້ເອົາ ຄຳສອນ ແລະ ຫຼັກປະຕິບັດຂອງຂະບວນການປະຕິຮູບສາສະໜາຖິ້ມໄປໄກໆ ຈຶ່ງມີຄວາມຈຳເປັນ ທີ່ຈະກັບຄືນສູ່ຫຼັກການສຳຄັນຂອງໂປຣແຕັສຕັງ ຄືການຢຶດຖືພຣະຄຳພີຢ່າງດຽວໄວ້ເປັນບັນທັດຖານ

[17] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 6.
[18] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 6.

ແຫ່ງຄວາມເຊື່ອ ແລະ ໜ້າທີ່ຮັບຜິດຊອບ. ຊາຕານຍັງຄົງເຮັດທຸກວິຖີທາງທີ່ມັນເຮັດໄດ້ ເພື່ອທຳລາຍເສລີພາບໃນການນັບຖືສາສະໜາ. ອຳນາດທີ່ຕໍ່ຕ້ານພຣະຄຣິສ ເຊິ່ງພວກປະທ້ວງໃນເມືອງສະປາຍໄດ້ປະຕິເສດນັ້ນ ກຳລັງຫາທາງຢ່າງຂະຫຍັນຂັນແຂງເພື່ອຄືນອຳນາດທີ່ມັນສູນເສຍໄປ. ການຢຶດໝັ້ນໃນພຣະຄຳຂອງພຣະເຈົ້າໂດຍບໍ່ຫັນເຫໄປທາງຊ້າຍ ຫຼື ທາງຂວາ ທີ່ປາກົດຢູ່ໃນຊ່ວງວິກິດຂອງການປະຕິຮູບສາສະໜາຄັ້ງສຳຄັນແຫ່ງສະຕະວັດທີ 16 ເປັນຄວາມຫວັງດຽວໃນການປະຕິຮູບໃນສະໄໝຂອງພວກເຮົາ. *{GC 204.2}*

ມີສັນຍານເຕືອນໄພໃຫ້ກັບກຸ່ມໂປຣແຕັສຕັງ, ແຕ່ໃນຂະນະດຽວກັນກໍມີສັນຍານທີ່ສະແດງໃຫ້ເຫັນວ່າ ພຣະເຈົ້າກຳລັງປົກປ້ອງຜູ້ທີ່ສັດຊື່. ໃນຊ່ວງນີ້, “ເມລັງໂທນໄດ້ນຳພາເພື່ອນຂອງລາວຊື່ວ່າ ຊີໂມນ ກິນເນອັດ ຜ່ານຖະໜົນຂອງເມືອງສະປາຍຢ່າງຮີບດ່ວນ ໄປຍັງແມ່ນ້ຳໄຣນ໌ (Rhine) ໂດຍຊຸກຍູ້ໃຫ້ເພື່ນຂ້າມແມ່ນ້ຳໄປ. ກິນເນອັດຮູ້ສຶກປະຫຼາດໃຈທີ່ເມລັງໂທນຮີບຮ້ອນຟ້າວຟັ່ງຢ່າງນັ້ນ. ພາຍຫຼັງເມລັງໂທນກ່າວວ່າ ‘ມີຜູ້ເຖົ້າຄົນໜຶ່ງທີ່ຂ້າພະເຈົ້າບໍ່ຮູ້ຈັກ ມີໜ້າຕາເຄັ່ງຂຶມ ມາເວົ້າກັບຂ້າພະເຈົ້າວ່າ ຈັກໜ້ອຍເຈົ້າໜ້າທີ່ຝ່າຍຍຸຕິທຳທີ່ກະສັດເຟີດິນັນສົ່ງມາເພື່ອຈັບ ກິນເນອັດ ກຳຈະມາເຖິງ.’” *{GC 205.1}*

ມື້ນັ້ນ ກິນເນອັດ ຮູ້ສຶກຂັດໃຈກັບຄຳເທດສະໜາຂອງ ດຣ. ເຟເບີ ຜູ້ເປັນນັກສາສະໜາສາດຊື່ດັງໃນລະບອບສັນຕະປາປາ; ເມື່ອເຟເບີເທດສະໜາຈົບ ກິນເນອັດ ຈຶ່ງເຂົ້າໄປຄັດຄ້ານທີ່ເຟເບີກ່າວປົກປ້ອງ ‘ຄຳສອນຜິດພ້ຽນທີ່ໜ້າກຽດບາງຢ່າງ.’ ເຟເບີເກັບຄວາມໂມໂຫໄວ້ໃນໃຈ ແຕ່ຮີບໄປເຂົ້າເຝົ້າກະສັດທັນທີ ແລະ ໄດ້ຮັບໝາຍຈັບ ກິນເນອັດ ຜູ້ເປັນສາດສະດາຈານຜູ້ກ້າຍືນຢັດຂອງມະຫາວິທະຍາໄລແຫ່ງເມືອງໄຮດັນເບີກ (Heidelberg). ເມລັງໂທນບໍ່ສົງໄສເລີຍວ່າ ພຣະເຈົ້າໄດ້ສົ່ງທູດສະຫວັນຂອງພຣະອົງມາເຕືອນ ແລະ ຊ່ວຍຊີວິດຂອງ ກິນເນອັດ. *{GC 205.2}*

“ເມລັງໂທນນອນບໍ່ຕິງຢູ່ແຄມຝັ່ງແມ່ນ້ຳໄຣນ໌ ລໍຖ້າຈົນ ກິນເນອັດ ໄດ້ຂ້າມແມ່ນ້ຳໄປພົ້ນມືຂອງພວກຜູ້ຂົ່ມເຫັງ. ເມື່ອເຫັນ ກິນເນອັດ ຂຶ້ນຝັ່ງກົງກັນຂ້າມ, ເມລັງໂທນກ່າວວ່າ: ‘ໃນທີ່ສຸດ, ເພື່ນໄດ້ພົ້ນຈາກແຂ້ວແຫຼມຂອງພວກທີ່ກະຫາຍເລືອດຜູ້ບໍຣິສຸດແລ້ວ.’ ເມື່ອເມລັງໂທນກັບໄປເຮືອນກໍພົບວ່າ ເຈົ້າໜ້າທີ່ໄດ້ຄົ້ນທຸກມຸມທຸກແຈຂອງເຮືອນເພື່ອຊອກຫາ ກິນເນອັດ.”[19] *{GC 205.3}*

ປະຊຸມສະພາທີ່ເມືອງອອກເບີກ

ເຖິງເວລາແລ້ວ, ທີ່ຂະບວນການປະຕິຮູບຈະຕ້ອງຖືກນຳໄປສະເໜີຕໍ່ໜ້າບັນດາຜູ້ມີອຳນາດໃນໂລກໃຫ້ຫຼາຍຂຶ້ນກວ່າເກົ່າ. ກະສັດເຟີດິນັນປະຕິເສດບໍ່ໃຫ້ພວກເຈົ້າແຂວງທີ່ຮັບເອົາຂ່າວປະເສີດມີໂອກາດເວົ້າ; ບັດນີ້, ພວກເພິ່ນໄດ້ໂອກາດນຳສະເໜີຄວາມເຊື່ອຂອງຕົນຕໍ່ໜ້າຈັກກະພັດ ແລະ ຕໍ່ໜ້າເຈົ້າໜ້າທີ່ຂອງຄຣິສຕະຈັກ ພ້ອມດ້ວຍຕົວແທນຝ່າຍອຳນາດການປົກຄອງທີ່ມາປະຊຸມກັນຢູ່ນັ້ນ. ເຫດການເປັນໄປດັ່ງນີ້: ຈັກກະພັດຊານສ໌ທີ 5 ປາຖະໜາທີ່ຈະລະງັບຄວາມຂັດແຍ້ງທີ່ເກີດຂຶ້ນໃນອານາຈັກ, ໃນປີຖັດຈາກການປະທ້ວງແຫ່ງເມືອງສະປາຍ ເພິ່ນຈຶ່ງສັ່ງໃຫ້ມີປະຊຸມສະພາຢູ່ເມືອງອອກເບີກ (Augsburg) ແລະ ປະກາດຄວາມຕັ້ງໃຈທີ່ຈະເຮັດໜ້າທີ່ປະທານສະພາດ້ວຍຕົນເອງ. ບັນດາຜູ້ນຳຝ່າຍຂະບວນການປະຕິຮູບຈຶ່ງຖືກຮຽກເອີ້ນໃຫ້ໄປເມືອງດັ່ງກ່າວ. *{GC 205.4}*

ເຖິງແມ່ນວ່າຂະບວນການປະຕິຮູບມີໄພອັນຕະລາຍອັນໃຫຍ່ຫຼວງຢູ່ຮອບດ້ານ, ແຕ່ຜູ້ສະໜັບສະໜູນຍັງຄົງຝາກຝັນທະນົດຂອງຕົນໄວ້ກັບພຣະເຈົ້າ ແລະ ປະຕິຍານຕົນວ່າຈະສັດຊື່ຕໍ່ຂ່າວປະເສີດ. ພວກທີ່ປຶກສາໄດ້ຮຽກຮ້ອງເຈົ້າແຂວງແຊັກຊັນນີ ຢ່າໄດ້ເຂົ້າໄປໃນສະພາ. ພວກເຂົາກ່າວວ່າ, ຈັກກະພັດກຳລັງລໍ້ພວກເຈົ້າແຂວງໄປຕິດກັບດັກ; “ມັນບໍ່ແມ່ນການສ່ຽງທັງໝົດບໍ ທີ່ຈະຖືກປິດກັ້ນໄວ້ໃນກຳແພງເມືອງ

[19] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 6.

ກັບສັດຕູຜູ້ເຂັ້ມແຂງ?" ແຕ່ມີຄົນອື່ນກ່າວດ້ວຍໃຈທີ່ສູງສົ່ງວ່າ, "ຂໍພຽງແຕ່ພວກເຈົ້າແຂວງປະຕິບັດຢ່າງ ກ້າຫານ ແລ້ວພັນທະກິດຂອງພຣະເຈົ້າກໍຈະສຳເລັດ." ສ່ວນລູເທີກ່າວວ່າ: "ພຣະເຈົ້າສັດຊື່, ພຣະອົງຈະ ບໍ່ປະຖິ້ມພວກເຮົາ."[20] ເຈົ້າແຂວງຈຶ່ງອອກເດີນທາງໄປຍັງເມືອງອອກເບີກ ພ້ອມດ້ວຍຄະນະບໍລິວານ. ທຸກ ຄົນລ້ວນແຕ່ຮັບຮູ້ເຖິງໄພອັນຕະລາຍທີ່ລ້ອມຮອບເຈົ້າແຂວງຜູ້ນີ້ຢູ່; ມີຫຼາຍຄົນເດີນທາງດ້ວຍໜ້າຕາທີ່ ໂສກເສົ້າ ແລະ ຈິດໃຈທີ່ເປັນທຸກ. ລູເທີເດີນທາງໄປກັບພວກເຂົາຈົນເຖິງເມືອງໂຄເບີກ (Coburg); ເມື່ອ ເພິ່ນຮ້ອງເພງ 'ພຣະເຈົ້າຊົງເປັນປ້ອມອັນເຂັ້ມແຂງ' ທີ່ແຕ່ງຂຶ້ນໃນເຫດການນັ້ນ ຄວາມເຊື່ອຂອງຄົນທີ່ ເດີນທາງໄປດ້ວຍກຳຟື້ນຟູຂຶ້ນ. ສຽງເພງນັ້ນໄດ້ກຳຈັດປັດເປົ່າຄວາມກັງວົນອອກໄປ ແລະ ຊ່ວຍຍົກພາລະ ອັນໜັກໜ່ວງອອກຈາກຈິດໃຈຂອງຄົນຈຳນວນຫຼາຍ. *{GC 206.1}*

ບັນດາເຈົ້າແຂວງທີ່ຮັບເຊື່ອຕາມຂະບວນການປະຕິຮູບ ຕັ້ງໃຈຂຽນແນວຄິດຂອງພວກເຂົາຢ່າງເປັນ ລະບົບ ພ້ອມກັບຫຼັກຖານຈາກພຣະຄຳພີເພື່ອນຳສະເໜີຕໍ່ສະພາ. ໜ້າທີ່ໃນການຂຽນບົດສະຫຼຸບຫຼັກຂໍ້ ເຊື່ອນັ້ນຖືກມອບໃຫ້ແກ່ລູເທີ, ເມລັງໂທນ ແລະ ເພື່ອນຮ່ວມງານຂອງພວກເພິ່ນ. ພວກຝ່າຍໂປຣແຕັສຕັງ ໄດ້ຮັບເອົາການປະກາດຫຼັກຂໍ້ເຊື່ອນີ້ ຈຶ່ງຮວມຕົວກັນເພື່ອລົງນາມໃນເອກະສານສຳຄັນດັ່ງກ່າວ. ນັ້ນເປັນ ສະຖານະການຄັບຂັນທີ່ທົດສອບຄວາມເຊື່ອ. ພວກຝ່າຍປະຕິຮູບເປັນຫ່ວງວ່າຈະມີຄົນໂຍງຫຼັກຂໍ້ເຊື່ອ ຂອງພວກເຂົາໄປກ່ຽວຂ້ອງກັບປະເດັນທາງການເມືອງ. ພວກເຂົາຮູ້ສຶກວ່າ ຂະບວນການປະຕິຮູບບໍ່ ຄວນໃຊ້ອິດທິພົນໂນ້ມນ້າວອື່ນໃດ ນອກເໜືອຈາກພຣະຄຳຂອງພຣະເຈົ້າ. ໃນຂະນະທີ່ພວກເຈົ້າແຂວງ ຄຣິສຕຽນລຸກຂຶ້ນໄປເພື່ອລົງນາມໃນຄຳປະກາດຫຼັກຂໍ້ເຊື່ອ, ເມລັງໂທນໄດ້ກ່າວຂັດຂວາງຂຶ້ນວ່າ: "ເລື່ອງ ແບບນີ້ເປັນວຽກງານຂອງນັກສາສະໜາສາດກັບພວກສາສະໜາຈານ, ສ່ວນຜູ້ມີອຳນາດບາລະມີໃນ ໂລກຄວນຈັດການໃນເລື່ອງອື່ນ ບໍ່ແມ່ນເລື່ອງນີ້." ເຈົ້າແຂວງຈອນຕອບວ່າ "ຢ່າໄດ້ຍົກເວັ້ນຂ້າພະເຈົ້າ ເລີຍ. ຂ້າພະເຈົ້າຕັ້ງໃຈວ່າຈະເຮັດສິ່ງທີ່ຖືກຕ້ອງ ໂດຍບໍ່ສົນໃຈວ່າຈະກະທົບຕໍ່ຕຳແໜ່ງຂອງຂ້າພະເຈົ້າແຕ່ ຢ່າງໃດ. ຂ້າພະເຈົ້າປາຖະໜາທີ່ຈະຍອມຮັບອົງພຣະຜູ້ເປັນເຈົ້າຕໍ່ໜ້າມະນຸດ. ມົງກຸດ ແລະ ເສື້ອຄຸມ ປະຈຳຕຳແໜ່ງຂອງຂ້າພະເຈົ້າໃນຖານະຜູ້ມີສິດເລືອກຈັກກະພັດ ບໍ່ມີຄ່າ ເມື່ອສົມທຽບກັບໄມ້ກາງແຂນ ຂອງພຣະເຢຊູຄຣິສ." ເມື່ອເວົ້າຈົບ, ເພິ່ນຈຶ່ງລົງນາມໃນເອກະສານ. ເຈົ້າແຂວງອີກຄົນໜຶ່ງກ່າວໃນຂະນະທີ່ ຈັບປາກກາຂຶ້ນມາວ່າ: "ຖ້າຈຳເປັນເພື່ອຖວາຍກຽດແດ່ພຣະເຢຊູຄຣິສເຈົ້າຂອງຂ້າພະເຈົ້າ, ຂ້າພະເຈົ້າ ພ້ອມແລ້ວ . . . ທີ່ຈະປະຖິ້ມຊັບສິນທັງໝົດ ແລະ ຊີວິດຂອງຕົນ. . . . ຖ້າຕ້ອງເລືອກແລ້ວ, ຂ້າພະເຈົ້າ ຍິນດີສະຫຼະປະຊາຊົນ ແລະ ແຜ່ນດິນຂອງຂ້າພະເຈົ້າ, ຍິນດີສະຫຼະບ້ານເກີດເມືອງນອນໂດຍມີແຕ່ ໄມ້ຄ້ອນເທົ້າຢູ່ໃນມື ແທນທີ່ຈະຮັບເອົາຄຳສອນອື່ນທີ່ບໍ່ແມ່ນຫຼັກຂໍ້ເຊື່ອໃນຄຳປະກາດນີ້."[21] ນີ້ແຫຼະຄື ຄວາມເຊື່ອ ແລະ ຄວາມກ້າຫານທີ່ຄົນຂອງພຣະເຈົ້າມີຢູ່ໃນເວລານັ້ນ. *{GC 206.2}*

ເວລາທີ່ກຳນົດໄວ້ກໍມາເຖິງທີ່ຈະຕ້ອງລາຍງານຕົວຕໍ່ໜ້າຈັກກະພັດ. ໃນເວລານັ້ນ ຈັກກະພັດຊານສ໌ທີ 5 ນັ່ງຢູ່ເທິງບັນລັງ ອ້ອມຮອບໄປດ້ວຍພວກເຈົ້າແຂວງຜູ້ມີສິດເລືອກຈັກກະພັດ ແລະ ບັນດາເຈົ້າແຂວງ ທົ່ວໄປ. ເມື່ອພວກຝ່າຍການປະຕິຮູບເຂົ້າໄປກໍມີການອ່ານຄຳປະກາດຫຼັກຂໍ້ເຊື່ອຂອງພວກເຂົາ. ໃນກອງ ປະຊຸມອັນຊົງກຽດນັ້ນ ມີການຊີ້ແຈງຄວາມຈິງແຫ່ງຂ່າວປະເສີດ ແລະ ຄວາມຜິດຂອງຄຣິສຕະຈັກຝ່າຍ ສັນຕະປາປາ. ສົມຄວນແລ້ວທີ່ມື້ນັ້ນໄດ້ຖືກຂະໜານນາມວ່າເປັນ "ວັນທີ່ຍິ່ງໃຫຍ່ທີ່ສຸດໃນປະຫວັດສາດ

[20] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 14, ບົດ 2.
[21] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 14, ບົດ 6.

ການປະຕິຮູບສາສະໜາ ແລະ ເປັນວັນທີ່ມີສະຫງ່າຣາສີທີ່ສຸດວັນໜຶ່ງໃນປະຫວັດສາດຂອງສາສະໜາ ຄຣິສ ແລະ ຂອງມະນຸດສະໂລກ.”[22] {GC 207.1}

ເວລາຜ່ານໄປບໍ່ເທົ່າໃດປີຕັ້ງແຕ່ລູເທີ ຜູ້ເປັນນັກບວດແຫ່ງເມືອງວິດເທັນເບີກ ໄດ້ຢືນຄົນດຽວຢູ່ຕໍ່ໜ້າ ສະພາແຫ່ງຊາດທີ່ເມືອງເວີມ. ບັດນີ້, ຜູ້ທີ່ມາຢືນແທນທີ່ເພິ່ນແມ່ນພວກທີ່ມີກຽດຕິຍົດສັກສີ ແລະ ເປັນ ເຈົ້າແຂວງທີ່ມີອຳນາດຫຼາຍທີ່ສຸດໃນອານາຈັກ. ລູເທີຖືກຫ້າມບໍ່ໃຫ້ໄປເມືອງອອກເບີກ, ແຕ່ເພິ່ນສາມາດ ຮ່ວມປະຊຸມຜ່ານຖ້ອຍຄຳ ແລະ ຄຳອະທິຖານຂອງເພິ່ນ. ເພິ່ນຂຽນວ່າ: “ຂ້າພະເຈົ້າດີໃຈຫຼາຍ ທີ່ມີຊີວິດຢູ່ຈົນເຖິງຊົ່ວໂມງນີ້ ເມື່ອພຣະຄຣິສໄດ້ຮັບການເຊີດຊູໂດຍຜູ້ທີ່ຊົ່ວກຽດເຊັ່ນນີ້ ແລະ ໃນ ທີ່ປະຊຸມອັນສູງສົ່ງ.”[23] ພຣະຄຳພີຈຶ່ງສຳເລັດຕາມທີ່ຂຽນໄວ້ວ່າ: “ຂ້ານ້ອຍຈະປະກາດຂໍ້ຄຳສັ່ງແກ່ ກະສັດ.” (ເພງສັນລະເສີນ 119:46). {GC 207.2}

ໃນສະໄໝຂອງອາຈານໂປໂລ ຂ່າວປະເສີດໄດ້ຮັບການປະກາດຕໍ່ໜ້າຄົນເຊື້ອເຈົ້າ ແລະ ຕໍ່ໜ້າພວກ ຊຸນນາງໃນນະຄອນຫຼວງໂຣມ ຜ່ານການທີ່ອາຈານໂປໂລຖືກຈຳຈອງໃນຄຸກ. ໃນສະໄໝປະຕິຮູບຄັ້ງໃຫຍ່ກໍ ເຊັ່ນກັນ, ສິ່ງທີ່ຈັກກະພັດຫ້າມບໍ່ໃຫ້ເທດສະໜາປະກາດໃນໂບດກໍຖືກປະກາດໃນຣາຊວັງ; ສິ່ງທີ່ຫຼາຍຄົນ ຖືວ່າບໍ່ເໝາະສົມແມ່ນແຕ່ຈະໃຫ້ຜູ້ຮັບໃຊ້ຟັງ, ພວກເຈົ້ານາຍໃນອານາຈັກກໍໄດ້ຍິນດ້ວຍຄວາມປະຫຼາດໃຈ. ມີກະສັດ ແລະ ພວກຊຸນນາງເປັນຜູ້ຟັງ, ພວກເຈົ້າແຂວງກໍເປັນຜູ້ປະກາດ ແລະ ຄຳເທດສະໜາ ແມ່ນຄວາມຈິງອັນສູງສົ່ງຂອງພຣະເຈົ້າ. ມີນັກຂຽນຄົນໜຶ່ງກ່າວວ່າ, “ຕັ້ງແຕ່ຍຸກອັກຄະສາວົກ ບໍ່ເຄີຍມີ ວຽກງານທີ່ສຳຄັນກວ່າ ຫຼື ການປະກາດຫຼັກຂໍ້ເຊື່ອທີ່ຍິ່ງໃຫຍ່ກວ່ານີ້.”[24] {GC 208.1}

ມີເຈົ້າຄະນະກາໂຕລິກກ່າວວ່າ, “ທຸກສິ່ງທີ່ພວກຝ່າຍລູເທີເວົ້ານັ້ນແມ່ນຄວາມຈິງ; ພວກເຮົາບໍ່ ສາມາດປະຕິເສດມັນໄດ້.” ມີອີກຄົນໜຶ່ງຖາມ ດຣ. ເອັກ ວ່າ “ທ່ານສາມາດໃຊ້ຫຼັກການໂຕ້ແຍ້ງກັບ ຄຳປະກາດຫຼັກຂໍ້ເຊື່ອຂອງເຈົ້າແຂວງຈອນກັບຜູ້ທີ່ຢູ່ຝ່າຍຂອງເພິ່ນໄດ້ບໍ?” ດຣ. ເອັກ ຕອບວ່າ: “ຖ້າ ຈະອາໄສແຕ່ຄຳຂຽນຂອງພວກອັກຄະສາວົກ ແລະ ພວກຜູ້ເຜີຍພຣະທຳໃນພຣະຄຳພີກໍບໍ່ສາມາດ ໂຕ້ແຍ້ງໄດ້. ແຕ່ຖ້າອາໄສງານຂຽນຂອງບັນດານັກຂຽນຄຣິສຕຽນໃນສະຕະວັດຕົ້ນໆ ແລະ ມະຕິຂອງ ສະພາຄຣິສຕະຈັກໃນສະໄໝຕ່າງໆ ກໍສາມາດໂຕ້ແຍ້ງໄດ້.” ຜູ້ຖາມຈຶ່ງອອກຄວາມເຫັນວ່າ, “ຂ້ອຍເຂົ້າໃຈ ແລ້ວ! ຕາມທີ່ທ່ານກ່າວມານີ້, ພວກລູເທີແຣນເຊື່ອຕາມພຣະຄຳພີ, ໃນຂະນະທີ່ພວກເຮົາຢູ່ນອກຄຳສອນ ຂອງພຣະຄຳພີ.”[25] {GC 208.2}

ມີເຈົ້າແຂວງຄົນອື່ນໃນເຢຍລະມັນກັບໃຈເຊື່ອຕາມຄຳສອນຂອງຝ່າຍປະຕິຮູບ. ຈັກກະພັດເອງກໍ ປະກາດວ່າ ຄຳສອນຂອງຝ່າຍໂປຣແຕັສຕັງເປັນຄວາມຈິງ. ຄຳປະກາດຫຼັກຂໍ້ເຊື່ອຖືກແປອອກເປັນຫຼາຍ ພາສາ ແລະ ຖືກແຜ່ກະຈາຍໄປທົ່ວເອີຣົບ. ໃນຍຸກສະໄໝຕ່າງໆ ຫຼັງຈາກນັ້ນກໍມີຫຼາຍລ້ານຄົນຮັບເອົາ ຫຼັກຂໍ້ເຊື່ອດັ່ງກ່າວມາເປັນຫຼັກຂໍ້ເຊື່ອຂອງຕົນ. {GC 208.3}

ຜູ້ຮັບໃຊ້ທີ່ສັດຊື່ຂອງພຣະເຈົ້າບໍ່ໄດ້ເຮັດວຽກຕາມລຳພັງ. ເຖິງແມ່ນວ່າ “ເຫຼົ່າວິນຍານທີ່ມີອຳນາດ ໃນອາກາດສະຖານ” ຮວມຕົວຕໍ່ສູ້ພວກເພິ່ນກໍຕາມ (ເອເຟໂຊ 6:12), ແຕ່ອົງພຣະຜູ້ເປັນເຈົ້າບໍ່ໄດ້ ປະຖິ້ມຄົນຂອງພຣະອົງ. ຖ້າຫາກວ່າຕາແຫ່ງຈິດວິນຍານໄດ້ເປີດຂຶ້ນ, ພວກເຂົາຄົງໄດ້ເຫັນຫຼັກຖານທີ່ ຊັດເຈນວ່າ ພຣະເຈົ້າສະຖິດຢູ່ນຳ ແລະ ຊົງຊ່ວຍເຫຼືອເໝືອນທີ່ພຣະອົງຊົງຊ່ວຍຜູ້ເຜີຍພຣະທຳໃນສະໄໝ ບູຮານ. ເມື່ອຄົນໃຊ້ຂອງເອລີຊາຊີ້ໃຫ້ນາຍເບິ່ງກອງທັບສັດຕູທີ່ອ້ອມຮອບພວກເຂົາຈົນບໍ່ມີທາງຈະໜີລອດ

[22] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 14, ບົດ 7.
[23] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 14, ບົດ 7.
[24] ໂດບິນເຍ, ເຫຼັ້ມ 14, ບົດ 7.
[25] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 14, ບົດ 8.

ໄປໄດ້, ຜູ້ເຜີຍພຣະທຳໄດ້ອະທິຖານວ່າ: “ຂໍພຣະອົງເປີດຕາຄົນຮັບໃຊ້ຂອງຂ້ານ້ອຍຄົນນີ້ໃຫ້ເຫັນກຳລັງຝ່າຍເຮົາແດ່ທ້ອນ.” (2 ກະສັດ 6:17). ແລ້ວລາວກໍໄດ້ເຫັນພູເຂົາເຕັມໄປດ້ວຍລົດຮົບ ແລະ ມ້າໄຟ ຄືກອງທັບແຫ່ງສະຫວັນທີ່ມາປົກປ້ອງຜູ້ຮັບໃຊ້ຂອງພຣະເຈົ້າ. ເຊັ່ນດຽວກັນ, ທູດສະຫວັນໄດ້ປົກປ້ອງຜູ້ຮັບໃຊ້ຂອງພຣະອົງໃນສະໄໝປະຕິຮູບສາສະໜາຄັ້ງໃຫຍ່ນັ້ນ. *{GC 208.4}*

ໜຶ່ງໃນຫຼັກການທີ່ລູເທີຍຶດຖືໄວ້ຢ່າງແໜ້ນໜາທີ່ສຸດ ຄືການທີ່ບໍ່ຄວນເພິ່ງພາຄວາມຊ່ວຍເຫຼືອຈາກອຳນາດລັດເພື່ອສະໜັບສະໜູນຂະບວນການປະຕິຮູບ ແລະ ບໍ່ຄວນໃຊ້ອາວຸດໃນການປົກປ້ອງຂະບວນການດັ່ງກ່າວ. ເພິ່ນມີຄວາມຊົ່ນຊື່ນຍິນດີທີ່ພວກເຈົ້າແຂວງໄດ້ຮັບເອົາຂ່າວປະເສີດຢ່າງເປີດເຜີຍ; ແຕ່ເມື່ອພວກເຂົາປະກາດວ່າຈະຮວມຕົວກັນເປັນສະຫະພັນເພື່ອປົກປ້ອງຂ່າວປະເສີດ, ເພິ່ນກ່າວວ່າ: “ຄຳສອນຂອງຂ່າວປະເສີດຄວນໄດ້ຮັບການປົກປ້ອງໂດຍ*ພຣະເຈົ້າພຽງຜູ້ດຽວ* . . . ມະນຸດເຂົ້າໄປແຊກແຊງໜ້ອຍເທົ່າໃດ ຄວາມຊ່ວຍເຫຼືອຂອງພຣະເຈົ້າກໍຈະຍິ່ງໂດດເດັ່ນຫຼາຍຂຶ້ນເທົ່ານັ້ນ. ເພິ່ນເຫັນວ່າ, ຂໍ້ສະເໜີເລື່ອງມາດຕະການດ້ານການເມືອງກໍເກີດຈາກຄວາມຢ້ານກົວ ແລະ ການບໍ່ໄວ້ວາງໃຈເຊິ່ງເປັນທ່າທີທີ່ບໍ່ສົມຄວນ ແລະ ເປັນຄວາມບາບ.”[26] *{GC 209.1}*

ເມື່ອພວກສັດຕູທີ່ມີອຳນາດ ໄດ້ຮວມຕົວກັນເພື່ອທຳລາຍຂະບວນການປະຕິຮູບ ແລະ ເບິ່ງຄືວ່າດາບຂອງສັດຕູນັບພັນນັບໝື່ນ ກຳລັງພ້ອມທີ່ຈະຖືກຊັກອອກຕໍ່ສູ້ຂະບວນການດັ່ງກ່າວ, ລູເທີໄດ້ຂຽນວ່າ: “ຊາຕານກຳລັງສະແດງຄວາມໂກດຮ້າຍຂອງມັນ, ພວກສັນຕະປາປາທີ່ຂາດສິນທຳກຳລັງວາງແຜນອຸບາຍ ແລະ ສົງຄາມກຳລັງກໍ່ຕົວຂຶ້ນເພື່ອຕໍ່ສູ້ພວກເຮົາ. ຈົ່ງຊັກຊວນພີ່ນ້ອງທັງຫຼາຍ ໃຫ້ຕໍ່ສູ້ຢ່າງກ້າຫານຕໍ່ໜ້າບັນລັງຂອງອົງພຣະຜູ້ເປັນເຈົ້າດ້ວຍຄວາມເຊື່ອ ແລະ ການອະທິຖານ ເພື່ອວ່າພຣະວິນຍານຂອງພຣະເຈົ້າຈະຊະນະໃຈພວກສັດຕູໃຫ້ສະຫງົບລົງ. ສິ່ງທີ່ພວກເຮົາຕ້ອງການຫຼາຍທີ່ສຸດ ແລະ ວຽກງານຂອງພວກເຮົາທີ່ສຳຄັນທີ່ສຸດ ແມ່ນການອະທິຖານ. ຈົ່ງບອກໃຫ້ພີ່ນ້ອງຮູ້ວ່າ ຄົມດາບວາງຢູ່ທີ່ຄໍແລ້ວ ຊາຕານຈ້ອງທຳລາຍຢູ່ແລ້ວ ສະນັ້ນຈົ່ງໃຫ້ພີ່ນ້ອງອະທິຖານ.”[27] *{GC 209.2}*

ຕໍ່ມາອີກຄັ້ງໜຶ່ງ ລູເທີໄດ້ກ່າວເຖິງແຜນການຕັ້ງສະຫະພັນຂອງພວກເຈົ້າແຂວງວ່າ ອາວຸດດຽວທີ່ຄວນໃຊ້ໃນການຕໍ່ສູ້ນີ້ ແມ່ນພຣະຄຳພີອັນເປັນ “ດາບຂອງພຣະວິນຍານ.” ເພິ່ນຂຽນເຖິງເຈົ້າແຂວງແຊັກຊັນນີວ່າ: “ອົງໃສ່ໃຈສຳນຶກຜິດຊອບແລ້ວ ພວກເຮົາບໍ່ສາມາດເຫັນດີກັບການຕັ້ງສະຫະພັນດັ່ງກ່າວ. ພວກເຮົາຍິນດີຕາຍສິບເທື່ອ ແທນທີ່ຈະເຫັນຂ່າວປະເສີດເປັນເຫດທຳລາຍຄົນອື່ນ ຈົນຕ້ອງເສຍເລືອດແມ່ນແຕ່ຢົດດຽວ. ທ່າທີຂອງພວກເຮົາແມ່ນລູກແກະທີ່ງຽມໄວ້ໃຫ້ຖືກຂ້າ. ພວກເຮົາຕ້ອງຮັບໄມ້ກາງແຂນຂອງພຣະຄຣິສແລ້ວແບກຕໍ່ໄປ. ຂໍຢ່າໃຫ້ທ່ານໄດ້ຮູ້ສຶກຢ້ານກົວ; ພວກເຮົາຈະມີຄວາມສຳເລັດຜ່ານການອະທິຖານ ຫຼາຍກວ່າສັດຕູທັງປວງຈະໄດ້ດ້ວຍການໂອ້ອວດຂອງພວກເຂົາ. ຂໍພຽງແຕ່ຢ່າໃຫ້ມືຂອງທ່ານເປິເປື້ອນດ້ວຍເລືອດຂອງພີ່ນ້ອງຂອງທ່ານເອງ. ຖ້າຈັກກະພັດອອກຄຳສັ່ງໃຫ້ພວກເຮົາຕ້ອງໄປລາຍງານຕົວທີ່ສານຂອງເພິ່ນ ພວກເຮົາພ້ອມທີ່ຈະໄປ. ທ່ານບໍ່ສາມາດປົກປ້ອງຄວາມເຊື່ອຂອງພວກເຮົາໄດ້, ແຕ່ໃຫ້ທຸກຄົນເຊື່ອ ແລະ ຮັບຜິດຊອບຕໍ່ການສ່ຽງອັນຕະລາຍທີ່ເກີດຈາກຄວາມເຊື່ອນັ້ນດ້ວຍຕົນເອງ.”[28] *{GC 209.3}*

---

[26] ໂດບິນເຍ, ເຫຼັ້ມ 10, ບົດ 14.
[27] ໂດບິນເຍ, ເຫຼັ້ມ 10, ບົດ 14.
[28] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 14, ບົດ 1.

ການເຝົ້າອະທິຖານຕາມລຳພັງ

ອຳນາດທີ່ເຮັດໃຫ້ໂລກສັ່ນສະເທືອນໃນສະໄໝປະຕິຮູບສາສະໜາຄັ້ງຍິ່ງໃຫຍ່ນັ້ນ ມາຈາກການເຝົ້າອະທິຖານຕາມລຳພັງ. ຜູ້ຮັບໃຊ້ຂອງພຣະເຈົ້າໃນຍຸກນັ້ນໄດ້ຢຶດໝັ້ນໃນພຣະສັນຍາຂອງພຣະອົງດ້ວຍຈິດໃຈທີ່ບໍຣິສຸດ ແລະ ຄວາມສະຫງົບໃຈສະເໝີນວ່າໄດ້ຢືນຢູ່ເທິງສິລາໝັ້ນຄົງ. ໃນລະຫວ່າງການຕໍ່ສູ້ທີ່ເມືອງອອກເບີກ, “ບໍ່ມີມື້ໃດທີ່ລູເທີບໍ່ໄດ້ອຸທິດເວລາຢ່າງໜ້ອຍສາມຊົ່ວໂມງເພື່ອການອະທິຖານ, ໂດຍທີ່ຊົ່ວໂມງເຫຼົ່ານັ້ນ ຖືກເລືອກຈາກຊ່ວງເວລາທີ່ມີຄວາມເໝາະສົມກັບການສຶກສາຫຼາຍທີ່ສຸດ.” ມິຄົນແອບໄດ້ຍິນເພື່ນອະທິຖານຢູ່ໃນຫ້ອງນອນຂອງເພື່ນ ໂດຍທີ່ເພື່ນທູນວິງວອນດ້ວຍໃຈຮ້ອນຮົນ “ດ້ວຍຄວາມຮັກ, ຄວາມຢຳເກງ ແລະ ຄວາມຫວັງເໝືອນຄົນສົນທະນາກັບຄົນໃກ້ຊິດ.” ລູເທີອະທິຖານວ່າ: “ພຣະບິດາເຈົ້າຂາ, ຂ້ານ້ອຍຮູ້ວ່າພຣະອົງເປັນພຣະບິດາ ແລະ ເປັນພຣະເຈົ້າຂອງໝູ່ຂ້ານ້ອຍ ແລະ ຮູ້ວ່າພຣະອົງຈະເຮັດໃຫ້ຄົນທີ່ຂົ່ມເຫັງລູກຂອງພຣະອົງຕ້ອງແຕກກະຈັດກະຈາຍໄປ ເພາະພຣະອົງເອງກຳຢູ່ໃນອັນຕະລາຍກັບໝູ່ຂ້ານ້ອຍ. ເຫດການທັງໝົດເປັນຂອງພຣະອົງ; ທີ່ໝູ່ຂ້ານ້ອຍລົງມືເຮັດນັ້ນກໍຍ້ອນການຊຸກຍູ້ຂອງພຣະອົງ. ພຣະບິດາເຈົ້າຂາ, ຂໍໃຫ້ພຣະອົງຊົງປົກປ້ອງໝູ່ຂ້ານ້ອຍແດ່ທ້ອນ!”[29] *{GC 210.1}*

ລູເທີຂຽນເຖິງເມລັງໂທນຜູ້ມີຈິດໃຈເຕັມໄປດ້ວຍຄວາມທຸກ ແລະ ຄວາມຢ້ານກົວວ່າ: “ພຣະຄຸນ ແລະ ສັນຕິສຸກຢູ່ໃນພຣະຄຣິສ; ຂໍເວົ້າອີກຄັ້ງໜຶ່ງວ່າ ສິ່ງເຫຼົ່ານີ້ຢູ່ໃນພຣະຄຣິສ ແລະ ບໍ່ໄດ້ຢູ່ໃນໂລກນີ້. ອາແມນ! ຂ້ອຍກຸງດຊັງຫຼາຍທີ່ສຸດທີ່ເຈົ້າກັງວົນຢູ່ຕະຫຼອດເວລາ. ຖ້າພາລະກິດຂອງພວກເຮົາບໍ່ຖືກຕ້ອງກໍຈົ່ງປະມັນຖິ້ມສາ; ແຕ່ຖ້າມັນຖືກຕ້ອງແລ້ວ ເປັນຫຍັງເຈົ້າຈຶ່ງດູໝິ່ນພຣະສັນຍາຂອງພຣະອົງທີ່ສັ່ງໃຫ້ເຮົານອນຫຼັບໂດຍບໍ່ຢ້ານກົວ? . . . ພຣະຄຣິສຈະຊົງຊ່ວຍພັນທະກິດແຫ່ງຄວາມຍຸຕິທຳ ແລະ ຄວາມຈິງຢ່າງແນ່ນອນ. ພຣະອົງຊົງພຣະຊົນຢູ່, ພຣະອົງຊົງຄອບຄອງຢູ່, ພວກເຮົາຈະຢ້ານສິ່ງໃດ?”[30] *{GC 210.2}*

ພຣະເຈົ້າຊົງຮັບຟັງສຽງຮ້ອງຂໍຂອງຜູ້ຮັບໃຊ້ຂອງພຣະອົງ. ພຣະອົງປະທານພຣະຄຸນໃຫ້ແກ່ພວກເຈົ້າແຂວງ ແລະ ພວກສາສະໜາຈານ, ແລະຊົງເສີມກຳລັງໃຫ້ພວກເຂົາສາມາດປົກປ້ອງຄວາມຈິງຈາກການຖືກຕໍ່ຕ້ານຈາກອຳນາດມືດຂອງໂລກນີ້. ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: “ເບິ່ງແມ! ເຮົາວາງຫີນກ້ອນໜຶ່ງລົງໃນເມືອງຊີໂອນ ເປັນຫີນເສົາເອກທີ່ເລືອກໄວ້ແລ້ວ ແລະ ເປັນຫີນທີ່ມີຄ່າອັນປະເສີດ. ຜູ້ທີ່ວາງໃຈໃນຫີນນັ້ນກໍຈະບໍ່ໄດ້ຮັບຄວາມອັບອາຍຈັກເທື່ອ.” (1 ເປໂຕ 2:6). ບັນດານັກປະຕິຮູບຝ່າຍໂປຣແຕັສຕັງໄດ້ກໍ່ສ້າງຂຶ້ນຢູ່ເທິງພຣະຄຣິສ, ປະຕູນະຣົກຈຶ່ງບໍ່ສາມາດເອົາຊະນະພວກເຂົາໄດ້. *{GC 210.3}*

[29] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 14, ບົດ 6.
[30] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 14, ບົດ 6.

12

ການປະຕິຮູບໃນປະເທດຝຣັ່ງ

ຄວາມຂັດແຍ້ງສືບຕໍ່ຫຼາຍປີ

ການປະທ້ວງແຫ່ງເມືອງສະປາຍ ແລະ ການປະກາດຫຼັກຂໍ້ເຊື່ອທີ່ເມືອງອອກເບີກ ອັນເປັນເຄື່ອງໝາຍແຫ່ງໄຊຊະນະຂອງການປະຕິຮູບໃນເຢຍລະມັນນັ້ນ ຕາມດ້ວຍຄວາມຂັດແຍ້ງ ແລະ ຄວາມມືດມົນເປັນເວລາຫຼາຍປີ. ຄວາມແຕກແຍກໃນກຸ່ມຜູ້ສະໜັບສະໜູນຂະບວນການປະຕິຮູບ ແລະ ການຖືກໂຈມຕີຈາກພວກສັດຕູທີ່ມີອຳນາດ ເຮັດໃຫ້ນິກາຍໂປຣແຕັສຕັງອ່ອນແອລົງ ຈົນເບິ່ງຄືວ່າຈະຕ້ອງຖືກທຳລາຍຢ່າງສິ້ນເຊີງ. ຫຼາຍພັນຄົນຍອມສະຫຼະຊີວິດຍ້ອນຄວາມເຊື່ອ. ເກີດສົງຄາມກາງເມືອງ; ຝ່າຍໂປຣແຕັສຕັງຖືກສະມາຊິກທີ່ເປັນຕົວຕັ້ງຕົວຕີຄົນໜຶ່ງທໍລະຍົດ, ເປັນເຫດໃຫ້ພວກເຈົ້າແຂວງຝ່າຍການປະຕິຮູບບາງຄົນທີ່ສູງສະຫງ່າທີ່ສຸດຕົກຢູ່ໃນກຳມືຂອງຈັກກະພັດ ແລະ ຖືກລາກເປັນຊະເລີຍຕາມເມືອງຕ່າງ ໆ. ແຕ່ໃນເວລາທີ່ຈັກກະພັດເບິ່ງຄືມີໄຊຊະນະນັ້ນ, ເພິ່ນກໍພັດຕ້ອງພົບກັບຄວາມພ່າຍແພ້. ເພິ່ນໄດ້ເຫັນເຫຍື່ອຖືກກອບກູ້ອອກຈາກກຳມື ແລະ ໃນທີ່ສຸດກໍຕ້ອງປະກາດການຍອມຮັບຕໍ່ຫຼັກຄຳສອນ ເຊິ່ງເພິ່ນໄດ້ທຸ້ມເທຊີວິດເພື່ອທຳລາຍ. ເພິ່ນໄດ້ເອົາອານາຈັກ, ຊັບສົມບັດ ແລະ ຊີວິດຂອງເພິ່ນເອງມາເດີມພັນ ເພື່ອທຳລາຍຄຳສອນທີ່ເພິ່ນເຫັນວ່ານອກຮີດ. ບັດນີ້ຈັກກະພັດເຫັນກອງທັບຂອງເພິ່ນຖືກທຳລາຍໃນສະໜາມຮົບ, ເງິນຄຳໃນກອງຄັງຖືກໃຊ້ຈ່າຍຈົນຫຼ້ອນ ແລະ ປະຊາຊົນໃນອານາຈັກທັ້ງຫຼາຍຂອງເພິ່ນຂູ່ວ່າຈະກະບົດ; ໃນຂະນະດຽວກັນນັ້ນ, ຄວາມເຊື່ອທີ່ເພິ່ນພະຍາຍາມສະກັດກັ້ນຢ່າງໄຮ້ປະໂຫຍດ ກຳກຳລັງຂະຫຍາຍອອກໄປໃນທຸກແຫ່ງຫົນ. ທີ່ຜ່ານມາຈັກກະພັດຊານສ໌ທີ 5 ໄດ້ສູ້ຮົບກັບພຣະເຈົ້າຜູ້ຊົງຣິດທານຸພາບສູງສຸດ. ພຣະເຈົ້າຊົງກ່າວວ່າ: “ໃຫ້ມີແສງແຈ້ງສ່ອງຂຶ້ນ,”[1] ແຕ່ເພິ່ນພະຍາຍາມຮັກສາຄວາມມືດໃຫ້ຄົງຢູ່. ຄວາມຕັ້ງໃຈຂອງເພິ່ນລົ້ມເຫຼວ; ແລ້ວໃນສະພາບທີ່ແກ່ຊະລາກ່ອນໄວ ແລະ ອ່ອນເພຍເມື່ອຍແຮງຈາກການດິ້ນຮົນອັນຍາວນານ, ເພິ່ນຈຶ່ງສະຫຼະຣາຊບັນລັງ ແລະ ໄປຈຳສິນໃນສຳນັກນັກບວດ. *{GC 211.1}*

ໃນປະເທດສວິສເຊີແລນໄດ້ເກີດວັນເວລາທີ່ມືດມົນສຳລັບຂະບວນການປະຕິຮູບ ເໝືອນທີ່ເກີດໃນປະເທດເຢຍລະມັນ. ເຖິງແມ່ນວ່າ ມີຫຼາຍກຸ່ມເມືອງທີ່ຮັບເອົາຫຼັກຄວາມເຊື່ອຂອງຝ່າຍປະຕິຮູບ, ແຕ່ກໍຍັງມີບາງກຸ່ມເມືອງຫຼັບຫູຫຼັບຕາ ແລະ ຍຶດຄຳສອນຂອງຄຣິສຕະຈັກໂຣມເອົາໄວ້ແໜ້ນ. ໃນທີ່ສຸດ, ການຂົ່ມເຫັງຜູ້ທີ່ປາຖະໜາທີ່ຈະຮັບເອົາຄວາມຈິງ ເປັນເຫດໃຫ້ເກີດສົງຄາມກາງເມືອງ. ທ່ານ ສວິງລີ ແລະ ຫຼາຍຄົນທີ່ຮ່ວມກັບເພິ່ນໃນການປະຕິຮູບນັ້ນ ໄດ້ລົ້ມຕາຍໃນສະໜາມຮົບອັນບອງເລືອດທີ່ ກາເປນ (Cappel). ເອໂກລຳພາດິອັດ ໄດ້ຮັບເຜິ່ນກະທົບຈາກຫາຍະນະທີ່ເກີດຂຶ້ນໃນໄລຍະເວລາດັ່ງກ່າວ ແລະ ຕໍ່ມາບໍ່ດົນກໍເສຍຊີວິດ. ຄຣິສຕະຈັກໂຣມສະຫຼອງໄຊຊະນະ; ແລະໃນຫຼາຍບ່ອນ

[1] ປະຖົມມະການ 1:3.

ເບິ່ງຄືວ່າ ກຳລັງຈະໄດ້ທຸກສິ່ງທີ່ສູນເສຍໄປນັ້ນກັບຄືນມາ. ແຕ່ພຣະເຈົ້າຜູ້ຊົງມີແຜນການອັນໝັ້ນຄົງນິຣັນດອນກໍບໍ່ໄດ້ປະຖິ້ມໄພ່ພົນ ຫຼື ວຽກງານຂອງພຣະອົງ; ພຣະຫັດຂອງພຣະອົງຈະຊົງປົດປ່ອຍພວກເຂົາ. ພຣະອົງຊົງຮຽກເອີ້ນຄົນງານເພື່ອສືບຕໍ່ວຽກງານການປະຕິຮູບໃນດິນແດນຕ່າງ ໆ. {GC 211.2}

ເລີເຟວ ແລະ ແຟໂຣ

ໃນປະເທດຝຣັ່ງ ກ່ອນທີ່ຊື່ຂອງລູເທີໄດ້ເປັນທີ່ຮູ້ຈັກໃນຖານະນັກປະຕິຮູບ, ແສງອາລຸນເລີ່ມແຈ້ງເບີກຟ້າແລ້ວ. ໜຶ່ງໃນຜູ້ທຳອິດທີ່ຮັບແສງສະຫວ່າງນັ້ນ ແມ່ນຊາຍຊະລາຄົນໜຶ່ງຊື່ເລີເຟວ (Lefevre). ເພິ່ນເປັນຜູ້ທີ່ມີຄວາມຮູ້ຈາກການສຶກສາຮ່ຳຮຽນຢ່າງກວ້າງຂວາງ, ເປັນອາຈານສອນຢູ່ມະຫາວິທະຍາໄລແຫ່ງນະຄອນປາຣີ ແລະ ເປັນຜູ້ສະໜັບສະໜູນລະບອບສັນຕະປາປາຢ່າງຈິງໃຈ ແລະ ກະຕືລືລົ້ນ. ໃນຂະນະທີ່ຄົ້ນຄວ້າໜັງສືບູຮານ ເພິ່ນກໍຫັນໄປໃຫ້ຄວາມສົນໃຈກັບພຣະຄຳພີ ຈຶ່ງນຳມາປະກອບເຂົ້າໃນການສອນນັກສຶກສາຂອງຕົນ. {GC 212.1}

ເລີເຟວເທີດທູນບູຊາພວກນັກບຸນຢ່າງໃຈຈົດໃຈຈໍ່ ຈຶ່ງຕັດສິນໃຈລົງມືຂຽນປະຫວັດສາດຂອງພວກນັກບຸນ ແລະ ຄົນທັງຫຼາຍທີ່ສະຫຼະຊີວິດຍ້ອນຄວາມເຊື່ອ ຕາມທີ່ປາກົດໃນຕຳນານຕ່າງ ໆ ຂອງຄຣິສ-ຕະຈັກໂຣມ. ນີ້ແມ່ນວຽກງານທີ່ໜັກໜ່ວງ, ແຕ່ຫຼັງຈາກທີ່ຂຽນໄປຫຼາຍພໍສົມຄວນແລ້ວ ເພິ່ນຄິດວ່າບາງທີອາດຈະມີຂໍ້ມູນໃນພຣະຄຳພີທີ່ເປັນປະໂຫຍດສຳລັບງານຂຽນໃນຄັ້ງນີ້ ເພິ່ນຈຶ່ງເລີ່ມສຶກສາພຣະຄຳພີເພື່ອປະກອບສ່ວນໃນໜັງສືດັ່ງກ່າວ. ແທ້ຈິງເພິ່ນໄດ້ອ່ານເຈີປະຫວັດຂອງນັກບຸນຫຼາຍຄົນໃນພຣະຄຳພີ ແຕ່ບໍ່ແມ່ນດັ່ງທີ່ປາກົດຢູ່ໃນປະຕິທິນຂອງຄຣິສຕະຈັກໂຣມ; ຄວາມສະຫວ່າງຈາກພຣະເຈົ້າໄດ້ສ່ອງແຈ້ງເຂົ້າມາໃນຈິດໃຈຂອງເພິ່ນ. ດ້ວຍຄວາມປະຫຼາດໃຈ ແລະ ຄວາມຮູ້ສຶກຂະເຫຍີ່ອງ ເພິ່ນຈຶ່ງປະວາງໂຄງການສ່ວນຕົວລົງ ເພື່ອອຸທິດຕົນໃນການສຶກສາຄົ້ນຄວ້າ ແລະ ການແບ່ງປັນພຣະຄຳຂອງພຣະເຈົ້າ. ໃນບໍ່ຊ້າບໍ່ດົນ ເພິ່ນກໍເລີ່ມສອນຄວາມຈິງອັນລ້ຳຄ່າ ເຊິ່ງເພິ່ນໄດ້ຄົ້ນພົບໃນພຣະຄຳພີ. {GC 212.2}

ໃນປີ 1512, ກ່ອນທີ່ລູເທີ ຫຼື ສວິງລີໄດ້ເລີ່ມການປະຕິຮູບ, ທ່ານ ເລີເຟວ ໄດ້ຂຽນວ່າ: “ແມ່ນພຣະເຈົ້າຜູ້ຊົງໃຫ້ເຮົາມີຄວາມຊອບທຳໂດຍຄວາມເຊື່ອ ເຊິ່ງລ້ວນແຕ່ເປັນພຣະຄຸນທີ່ໃຫ້ຄວາມຊອບທຳນັ້ນສຳລັບຊີວິດນິຣັນ.”[2] ເພິ່ນພິຈາລະນາເຖິງຄວາມລ້ຳເລີศແຫ່ງການຊົງໄຖ່ຈຶ່ງຮ້ອງອອກມາວ່າ: “ໂອ້, ການແລກປ່ຽນອັນລ້ຳເລີດທີ່ເກີນບັນລະຍາຍ: ພຣະອົງຜູ້ບໍ່ມີບາບຖືກຕັດສິນລົງໂທດ ໃນຂະນະທີ່ຄົນຜິດໄດ້ຮັບອິດສະຫຼະ; ພຣະອົງຜູ້ທີ່ຊົງໃຫ້ພຣະພອນໄດ້ຖືກສາບແຊ່ງ ແລະ ຜູ້ທີ່ຕ້ອງຄຳສາບແຊ່ງກໍໄດ້ຮັບພຣະພອນ; ພຣະອົງຜູ້ໃຫ້ຊີວິດໄດ້ເສຍຊີວິດ ແລະ ຜູ້ມີສະພາບເໝືອນຄົນຕາຍກັບໄດ້ຊີວິດ; ພຣະອົງຜູ້ຊົງປະກອບດ້ວຍສະຫງ່າຣາສີຊົງຖືກປົກຄຸມດ້ວຍຄວາມມືດ ແລະ ຜູ້ທີ່ຮູ້ຈັກແຕ່ຄວາມສັບສົນພັດໄດ້ຮັບສະຫງ່າຣາສີ.”[3] {GC 212.3}

ໃນຂະນະທີ່ສອນວ່າ ສະຫງ່າຣາສີແຫ່ງຄວາມລອດເປັນຂອງພຣະເຈົ້າພຽງແຕ່ຜູ້ດຽວ, ເພິ່ນກໍຍັງໄດ້ປະກາດວ່າ ໜ້າທີ່ຂອງການເຊື່ອຟັງເປັນຂອງມະນຸດ. ເພິ່ນກ່າວວ່າ: “ຖ້າທ່ານເປັນສະມາຊິກຂອງຄຣິສຕະຈັກຂອງພຣະຄຣິສແລ້ວ, ທ່ານກໍເປັນອະໄວຍະວະສ່ວນໜຶ່ງໃນພຣະກາຍຂອງພຣະອົງ; ຖ້າທ່ານເປັນສ່ວນໜຶ່ງໃນພຣະກາຍຂອງພຣະອົງແລ້ວ ກໍສະແດງວ່າທຳມະຊາດຂອງພຣະເຈົ້າດຳລົງຢູ່ໃນທ່ານ. . . . ໂອ້ ຖ້າຫາກມະນຸດສາມາດເຂົ້າໃຈຢ່າງຖ່ອງແທ້ເຖິງສິດທິພິເສດນີ້ໄດ້, ພວກເຂົາຈະມີຊີວິດທີ່ສະອາດບໍຣິສຸດປາສະຈາກຄວາມຊົ່ວພຽງໃດ ແລະ ເມື່ອປຽບທຽບກັບສະຫງ່າຣາສີທີ່ຢູ່ພາຍໃນຕົນ ຄື

[2] ໄວລີ (Wylie), ເຫຼັ້ມ 13, ບົດ 1.

[3] ໂດບິນເຍ (D’Aubigné), ສະບັບຕີພິມທີ່ລອນດອນ, ເຫຼັ້ມ 12, ບົດ 2.

ສະຫງ່າຣາສີທີ່ມະນຸດບໍ່ສາມາດເຫັນໄດ້, ພວກເຂົາຈະຖືວ່າ ສະຫງ່າຣາສີທັງໝົດຂອງໂລກນີ້ບໍ່ມີຄ່າ ຫຍັງເລີຍ."[4] *{GC 213.1}*

ມີນັກສຶກສາບາງຄົນຂອງເລີເຟວ ທີ່ໄດ້ຮັບຟັງການສອນຂອງເພິ່ນຢ່າງກະຕືລືລົ້ນ; ແລະຫຼັງຈາກທີ່ ເພິ່ນເສຍຊີວິດ ພວກເຂົາຍັງສືບຕໍ່ປະກາດສັດຈະທຳຄວາມຈິງເປັນເວລາດົນ. ໜຶ່ງໃນນັ້ນຄື ວິນລຽມ ແຟໂຣ (William Farel). ພໍ່ແມ່ຂອງເພິ່ນເປັນຄົນທຳມະທຳໂມ ແລະ ໄດ້ສອນເພິ່ນໃຫ້ເຊື່ອວາງໃຈ ໃນຄຳສອນຂອງຄຣິສຕະຈັກໂດຍບໍ່ຕ້ອງສົງໄສ. ເພິ່ນອາດກ່າວກ່ຽວກັບຕົວເອງໃນຊ່ວງເວລານັ້ນ ຕາມ ຖ້ອຍຄຳຂອງອັກຄະສາວົກໂປໂລວ່າ: "ຂ້ານ້ອຍດຳເນີນຊີວິດໃນຖານະເປັນສະມາຊິກຂອງຄະນະຟາຣີຊາຍ ຄືພວກທີ່ຖືສາສະໜາຢ່າງເຄັ່ງຄັດທີ່ສຸດ." (ກິດຈະການ 26:5). ເພິ່ນສັດທາໃນຄຣິສຕະຈັກໂຣມຢ່າງ ແຮງກ້າ ແລະ ມີຄວາມກະຕືລືລົ້ນຢ່າງຮຸນແຮງ ທີ່ຈະທຳລາຍທຸກຄົນທີ່ກ້າຕໍ່ຕ້ານຄຣິສຕະຈັກ. ພາຍ ຫຼັງເພິ່ນໄດ້ກ່າວເຖິງຊີວິດຂອງຕົນໃນຊ່ວງນັ້ນວ່າ: "ເມື່ອໄດ້ຍິນຜູ້ໃດເວົ້າຕໍ່ຕ້ານສັນຕະປາປາ ຂ້າພະເຈົ້າ ກໍຈະກັດແຂ້ວເໝືອນກັບໝາປ່າທີ່ຮ້າຍກາດ."[5] ເພິ່ນໄດ້ບູຊາພວກນັກບຸນຢ່າງບໍ່ຮູ້ອິດຮູ້ເມື່ອຍ ແລະ ໄປ ຢາມໂບດຕ່າງ ໆ ທົ່ວນະຄອນປາຣີກັບອາຈານເລີເຟວ ເພື່ອນະມັດສະການທີ່ແທ່ນບູຊາ ແລະ ປະດັບ ສານສັກສິດດ້ວຍຂອງຖວາຍ. ແຕ່ທັງໝົດນັ້ນບໍ່ສາມາດນຳມາເຊິ່ງສັນຕິສຸກໃນຈິດໃຈໄດ້. ແຟໂຣສຳນຶກ ໃນຄວາມບາບຢ່າງຈັບໃຈ, ເຊິ່ງທຸກຢ່າງທີ່ເພິ່ນເຮັດເພື່ອບຳເພັນບຸນ ກໍບໍ່ສາມາດລົບລ້າງຄວາມຮູ້ສຶກນັ້ນ ໄດ້. ເພິ່ນຟັງຖ້ອຍຄຳຂອງອາຈານເລີເຟວເໝືອນເປັນສຽງທີ່ກ່າວຈາກສະຫວັນວ່າ: "ຄວາມລອດເປັນເລື່ອງ ຂອງພຣະຄຸນ." "ຜູ້ບໍຣິສຸດຖືກຕັດສິນລົງໂທດ ໃນຂະນະທີ່ຜູ້ກະທຳຜິດພົ້ນໂທດ." "ມີແຕ່ການສິ້ນພຣະຊົນ ຂອງພຣະຄຣິສເທິງໄມ້ກາງແຂນເທົ່ານັ້ນ ທີ່ເປີດປະຕູສະຫວັນ ແລະ ປິດປະຕູຂອງນະຣົກ."[6] *{GC 213.2}*

ແຟໂຣຮັບເອົາຄວາມຈິງດ້ວຍຄວາມຍິນດີ. ການກັບໃຈຂອງເພິ່ນເໝືອນການກັບໃຈຂອງອາຈານ ໂປໂລ, ເພິ່ນຈຶ່ງຫັນຈາກການເປັນທາດຂອງຮີດຄອງປະຕິບັດທີ່ສືບທອດມາຈາກບັນພະບຸລຸດ ໄປ ສູ່ເສລີພາບຂອງລູກຂອງພຣະເຈົ້າ. ເພິ່ນກ່າວວ່າ: "ແທນທີ່ຈະມີຫົວໃຈໂຫດຫ້ຽມເໝືອນໝາປ່າທີ່ ຮ້າຍກາດ" ເພິ່ນກັບມີ "ຫົວໃຈເໝືອນລູກແກະທີ່ອ່ອນໂຍນ ແລະ ບໍ່ມີພິດໄພ; ເພິ່ນໄດ້ຕັດໃຈຈາກ ສັນຕະປາປາຢ່າງສິ້ນເຊີງ ແລະ ມອບໃຈໃຫ້ພຣະເຢຊູຄຣິສ."[7] *{GC 214.1}*

ເຈົ້າຄະນະແຫ່ງເມືອງໂມ

ໃນຂະນະທີ່ເລີເຟວຍັງສືບຕໍ່ເຜີຍແຜ່ຄວາມສະຫວ່າງໃຫ້ແກ່ນັກສຶກສາຂອງເພິ່ນ, ແຟໂຣກໍອອກໄປ ປະກາດຄວາມຈິງໃຫ້ປະຊາຊົນຢ່າງເປີດເຜີຍດ້ວຍຄວາມກະຕືລືລົ້ນໃນພາລະກິດຂອງພຣະຄຣິສເໝືອນ ທີ່ເຄີຍມີໃຫ້ກັບວຽກງານຂອງສັນຕະປາປາ. ໃນບໍ່ຊ້າມີເຈົ້າໜ້າທີ່ຄຣິສຕະຈັກຄົນໜຶ່ງ ຄືເຈົ້າຄະນະແຫ່ງ ເມືອງໂມ (Meaux) ໄດ້ມາຮ່ວມປະກາດກັບພວກເຂົາ. ຕໍ່ມາກໍມີຄົນອື່ນທີ່ມີຄວາມໂດດເດັ່ນໃນເລື່ອງຄວາມ ສາມາດ ແລະ ວິຊາຄວາມຮູ້ໄດ້ເຂົ້າຮ່ວມໃນການປະກາດຂ່າວປະເສີດດ້ວຍ, ແລ້ວກໍມີຄົນຮັບເຊື່ອຈາກ ທຸກຊົນຊັ້ນຂອງສັງຄົມ ຕັ້ງແຕ່ຄົນໃນບ້ານເຮືອນຂອງພວກຊ່າງຝີມື ແລະ ຊາວບ້ານທຳມະດາ ຈົນເຖິງ ຄົນໃນຣາຊວັງຂອງກະສັດ. ເອື້ອຍຂອງຟຣານຊິສທີ 1 ຜູ້ເປັນກະສັດຢູ່ໃນຂະນະນັ້ນ ໄດ້ຮັບເຊື່ອໃນ ຄຳສອນຂອງຂະບວນການປະຕິຮູບສາສະໜາ. ກະສັດຟຣານຊິສເອງ ແລະ ແມ່ຂອງເພິ່ນເບິ່ງຄືວ່າຈະ

[4] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 12, ບົດ 2.
[5] ໄວລີ, ເຫຼັ້ມ 13, ບົດ 2.
[6] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 2.
[7] ໂດບິນເຍ, ເຫຼັ້ມ 12, ບົດ 3.

ເຫັນດີກັບຄຳສອນດັ່ງກ່າວໃນຊ່ວງໄລຍະໜຶ່ງ; ພວກນັກປະຕິຮູບຈຶ່ງເຝົ້າຫວັງທີ່ຈະເຫັນວັນທີ່ຄົນທົ່ວປະເທດຝຣັ່ງໄດ້ຮັບເຊື່ອໃນຂ່າວປະເສີດ. {GC 214.2}

ແຕ່ພວກເຂົາບໍ່ໄດ້ສົມຫວັງ. ມີການທົດລອງ ແລະ ການກົດຂີ່ຂົ່ມເຫັງລໍຖ້າພວກສາວົກຂອງ ພຣະຄຣິສ. ເຖິງຢ່າງໃດກໍຕາມ, ພຣະເຈົ້າຊົງເມດຕາພວກນັກປະຕິຮູບ ແລະ ປິດບັງເລື່ອງນີ້ໄວ້ຈາກຕາຂອງພວກເຂົາ. ມີຄວາມສະຫງົບສຸກຢູ່ຊ່ວງໄລຍະເວລາໜຶ່ງ ອັນເປັນໂອກາດໃຫ້ພວກເຂົາໄດ້ຮັບການເສີມແຮງ ເພື່ອຈະສາມາດຮັບມືກັບພະຍຸແຫ່ງການຂົ່ມເຫັງນັ້ນໄດ້. ໃນເວລາດັ່ງກ່າວ ຂະບວນການປະຕິຮູບໄດ້ມີການຂະຫຍັບຂະຫຍາຍຢ່າງໄວວາ. ເຈົ້າຄະນະແຫ່ງເມືອງໂມໄດ້ເຮັດວຽກຢ່າງກະຕືລືລົ້ນໃນເຂດຮັບຜິດຊອບຂອງຕົນເອງ ເພື່ອສັ່ງສອນພວກບາດຫຼວງ ແລະ ປະຊາຊົນ. ພວກບາດຫຼວງທີ່ເຮັດຜິດສິນທຳ ແລະ ຂາດການຮຽນຮູ້ຖືກປົດອອກຈາກຕຳແໜ່ງ ແລະ ເທົ່າທີ່ເປັນໄປໄດ້ ກໍມີການຕັ້ງຄົນທີ່ມີສິນທຳ ແລະ ການສຶກສາມາແທນທີ່. ເຈົ້າຄະນະປາຖະໜາຢ່າງແຮງກ້າໃຫ້ສະມາຊິກຂອງເພິ່ນສາມາດເຂົ້າເຖິງພຣະຄຳຂອງພຣະເຈົ້າໄດ້, ແລ້ວບໍ່ດົນກໍເປັນຢ່າງນັ້ນ. ເລີເຟວລ໌ງມືແປພຣະຄຳພີໃໝ່; ສະນັ້ນ, ໃນຂະນະທີ່ພຣະຄຳພີພາສາເຢຍລະມັນຂອງລູເທີກຳລັງຕີພິມທີ່ເມືອງວິດເທັນເບີກ ພຣະຄຳພີໃໝ່ພາສາຝຣັ່ງໄດ້ຖືກພິມເຜີຍແຜ່ທີ່ເມືອງໂມ. ເຈົ້າຄະນະໄດ້ທຸ້ມເທເຮັດວຽກໂດຍບໍ່ລົດລະ ແລະ ຈ່າຍເງິນໂດຍບໍ່ຫົດມື ເພື່ອແຈກຈຳໜ່າຍພຣະຄຳພີໃນເຂດຮັບຜິດຊອບຂອງຕົນ; ໃນບໍ່ຊ້າບໍ່ດົນ ປະຊາຊົນຊາວເມືອງໂມຈຶ່ງໄດ້ເປັນເຈົ້າຂອງພຣະຄຳພີ. {GC 214.3}

ນັກເດີນທາງທີ່ໃກ້ຕາຍເພາະຂາດນ້ຳຈະດື່ມນ້ຳຈາກຕານ້ຳໃສດ້ວຍຄວາມຍິນດີສັນໃດ, ຄົນເຫຼົ່ານີ້ກໍໄດ້ຮັບເອົາຂ່າວສານແຫ່ງສະຫວັນສັນນັ້ນ. ກະສິກອນທີ່ເຮັດວຽກຕາມທົ່ງໄຮ່ທົ່ງນາ ແລະ ຊ່າງຝີມື ຕ່າງຄົນຕ່າງເພີ່ມຄວາມສຸກໃຫ້ກັບວຽກງານປະຈຳວັນ ໂດຍການເວົ້າເຖິງຄວາມຈິງອັນລ້ຳຄ່າໃນພຣະຄຳພີ. ໃນຕອນແລງ ແທນທີ່ຈະໄປຮ້ານເຫຼົ້າຮ້ານເບຍ ພວກເຂົາໄດ້ມາເຕົ້າໂຮມກັນຢູ່ໃນບ້ານເຮືອນຂອງກັນແລະກັນ ເພື່ອອ່ານພຣະຄຳຂອງພຣະເຈົ້າ, ຮ່ວມກັນອະທິຖານ ແລະ ສັນລະເສີນ. ບໍ່ດົນກໍມີການປ່ຽນແປງອັນໃຫຍ່ຫຼວງໃນຊຸມຊົນເຫຼົ່ານີ້ຢ່າງເຫັນໄດ້ຈະແຈ້ງ. ເຖິງແມ່ນວ່າພວກເຂົາຈະເປັນຊົນຊັ້ນທີ່ຕ່ຳຕ້ອຍທີ່ສຸດ, ເປັນຄົນຍາກຈົນທີ່ຂາດການສຶກສາ ແລະ ຕ້ອງເຮັດວຽກໜັກ, ແຕ່ພຣະຄຸນຂອງພຣະເຈົ້າໄດ້ປ່ຽນແປງ ແລະ ເຊີດຊູພວກເຂົາເຊິ່ງເຫັນໄດ້ຢ່າງຊັດເຈນ. ຄົນເຫຼົ່ານີ້ເປັນຄົນຖ່ອມຕົວ, ມີຄວາມຮັກ ແລະ ຄວາມບໍຣິສຸດ, ເຮັດໃຫ້ພວກເຂົາເປັນພະຍານເຖິງຜົນຂອງຂ່າວປະເສີດໃນຊີວິດຂອງຜູ້ທີ່ຮັບເອົາດ້ວຍຄວາມຈິງໃຈ. {GC 215.1}

ແສງສະຫວ່າງທີ່ຈູດປະກາຍທີ່ເມືອງໂມໄດ້ສ່ອງອອກໄປໄກ; ທຸກມື້ທຸກວັນຈຳນວນຜູ້ຮັບເຊື່ອໄດ້ເພີ່ມຂຶ້ນ. ຄວາມໂກດຮ້າຍຂອງພວກຜູ້ນຳຄຣິສຕະຈັກຖືກກະສັດຢັບຢັ້ງຢູ່ຊ່ວງເວລາໜຶ່ງ ເພາະເພິ່ນກຸງດຊັງທີ່ພວກບາດຫຼວງຖືກຄອບງຳດ້ວຍອະຄະຕິ; ແຕ່ໃນທີ່ສຸດພວກຜູ້ນຳຝ່າຍສັນຕະປາປາໄດ້ຮັບໃນສິ່ງທີ່ພວກຕົນຕ້ອງການ ຈຶ່ງມີການປັກຫຼັກປະຫານຂຶ້ນ. ເມື່ອເຈົ້າຄະນະແຫ່ງເມືອງໂມຖືກສະຖານະການບັງຄັບໃຫ້ຕ້ອງເລືອກລະຫວ່າງການຖືກປະຫານດ້ວຍການເຜົາໄຟກັບການປະຖິ້ມຄວາມເຊື່ອ, ເພິ່ນຈຶ່ງຕັດສິນໃຈເລືອກເອົາທາງທີ່ງ່າຍກວ່າ. ແຕ່ເຖິງແມ່ນວ່າຜູ້ນຳໄດ້ປະຖິ້ມຄວາມເຊື່ອແລ້ວກໍຕາມ, ຝູງແກະຂອງເພິ່ນກໍຍັງຄົງຢຶດໝັ້ນຢູ່ໃນຄວາມເຊື່ອ. ຫຼາຍຄົນຍອມຖືກປະຫານຊີວິດ ແລະ ໄດ້ເປັນພະຍານເພື່ອຄວາມຈິງທ່າມກາງແປວໄຟ. ໂດຍຄວາມກ້າຫານ ແລະ ຄວາມສັດຊື່ທ່າມກາງແປວໄຟແຫ່ງແດນປະຫານ, ຊາວຄຣິສຕຽນຜູ້ຕ່ຳຕ້ອຍເຫຼົ່ານີ້ໄດ້ກ່າວແກ່ຫຼາຍພັນຄົນ ຜູ້ເຊິ່ງໃນຍາມທີ່ສຸກສະບາຍບໍ່ເຄີຍໄດ້ຍິນຄຳພະຍານຂອງພວກເຂົາ. {GC 215.2}

ທ່ານ ເບີຄວິນ ອຸທິດຕົນເພື່ອປະກາດຂ່າວປະເສີດ

ບໍ່ແມ່ນພຽງຄົນຍາກຈົນ ແລະ ຜູ້ຕ່ຳຕ້ອຍເທົ່ານັ້ນທີ່ກ້າເປັນພະຍານເພື່ອພຣະຄຣິສທ່າມກາງຄວາມທຸກທໍລະມານ ແລະ ການຖືກໝິ່ນປະໝາດ. ໃນຜາສາດຫີນຂອງພວກຂຸນນາງ ແລະ ໃນຣາຊວັງຂອງກະສັດ ຍັງມີຄົນທີ່ມີຈິດວິນຍານສູງສົ່ງ ທີ່ຖືວ່າຄວາມຈິງມີຄ່າຍິ່ງກວ່າຊັບສົມບັດ, ຕຳແໜ່ງ ຫຼື ແມ່ນແຕ່ຊີວິດ. ປາກົດວ່າ ຜູ້ທີ່ໃສ່ເຄື່ອງເກາະຂອງເຈົ້ານາຍບາງຄົນມີຈິດວິນຍານອັນສູງສົ່ງ ແລະ ໝັ້ນຄົງກວ່າເຈົ້າຄະນະຜູ້ແຕ່ງກາຍດ້ວຍເສື້ອຄຸມຍາວ ແລະ ໝວກປະຈຳຕຳແໜ່ງ. ທ່ານ ຫຼຸຍສ໌ ແຫ່ງ ເບີຄວິນ (Louis de Berquin) ເປັນຕົວຢ່າງຂອງຄົນກຸ່ມນີ້. ເພິ່ນເກີດໃນຕະກູນຂຸນນາງ, ເປັນອັດສະວິນຜູ້ກ້າຫານປະຈຳຣາຊສຳນັກ, ເປັນຄົນທີ່ອຸທິດຕົນໃນການສຶກສາ, ມີມາລະຍາດ ແລະ ສິນທຳຢ່າງບໍ່ມີຕຳໜິ. ນັກຂຽນຄົນໜຶ່ງໄດ້ກ່າວວ່າ: “ເພິ່ນເປັນຜູ້ຕິດຕາມກົດລະບຽບຂອງລະບອບສັນຕະປາປາຢ່າງເຄັ່ງຄັດ ແລະ ມັກຟັງຄຳເທດສະໜາ ແລະ ຖ້ອຍຄຳປະກອບພິທີສິນລະນຶກຂອງການໂຕລິກເປັນປະຈຳ. . . . ແຕ່ໃນທ່າມກາງຄຸນງາມຄວາມດີທັງໝົດຂອງເພິ່ນນັ້ນ ຂໍ້ທີ່ສຳຄັນທີ່ສຸດເໜືອສິ່ງອື່ນໃດຄື ເພິ່ນຖືວ່າ ຄຳສອນຂອງຄະນະລູເທີແຮນເປັນສິ່ງທີ່ໜ້າລັງກຽດເປັນພິເສດ.” ແຕ່ເຊັ່ນດຽວກັບອີກຫຼາຍຄົນທີ່ພຣະເຈົ້າຊົງນຳໃຫ້ອ່ານພຣະຄຳຂອງພຣະອົງ, ເພິ່ນກໍປະຫຼາດໃຈເມື່ອພົບວ່າພຣະຄຳພີ “ບໍ່ແມ່ນຄຳສອນຂອງຄຣິສຕະຈັກໂຣມ, ແຕ່ເປັນຄຳສອນຂອງລູເທີ.”[8] ຕັ້ງແຕ່ນັ້ນເປັນຕົ້ນມາ ເພິ່ນໄດ້ອຸທິດຕົນດ້ວຍສິ້ນສຸດຫົວໃຈໃນການປະກາດຂ່າວປະເສີດ. *{GC 215.3}*

ເພິ່ນເປັນ “ຂຸນນາງທີ່ມີການສຶກສາຫຼາຍທີ່ສຸດໃນປະເທດຝຣັ່ງ,” ເປັນຄົນສະຫຼຽວສະຫຼາດ, ມີວາຈາຄົມຄາຍ, ເປັນຄົນກ້າຫານ, ສູ້ບໍ່ຖອຍ, ມີຄວາມກະຕືລືລົ້ນເໝືອນດັ່ງເຫຼົ່າວິລະຊົນ ແລະ ມີອິດທິພົນໃນຣາຊສຳນັກ ເນື່ອງຈາກເພິ່ນເປັນຄົນໜຶ່ງທີ່ກະສັດນິຍົມຊົມຊອບ; ເພາະສິ່ງເຫຼົ່ານີ້ ຈຶ່ງມີຫຼາຍຄົນຖືວ່າເພິ່ນຈະເປັນຜູ້ປະຕິຮູບປະເທດຊາດຂອງຕົນຢ່າງແນ່ນອນ. ທ່ານ ເບຊາ (Beza) ໄດ້ກ່າວວ່າ: “ຖ້າຫາກກະສັດຟຣານຊິສທີ 1 ເໝືອນເຈົ້າແຂວງ[ເຟຣເດີຣິກ], ເບີຄວິນຄົງໄດ້ເປັນລູເທີອີກຄົນທີສອງ.” ສ່ວນພວກນິຍົມສັນຕະປາປາກໍຮ້ອງຂຶ້ນວ່າ: “ລາວແຮງຮ້າຍກວ່າລູເທີອີກ.”[9] ສຳລັບຄົນທີ່ສະໜັບສະໜຸນຄຣິສຕະຈັກໂຣມໃນປະເທດຝຣັ່ງ ກໍຖືວ່າເພິ່ນໜ້າຢ້ານກົວກວ່າລູເທີແທ້ໆ. ພວກເຂົາໄດ້ຈັບເພິ່ນເຂົ້າຄຸກໃນຂໍ້ຫາເປັນຄົນນອກຮີດ, ແຕ່ກະສັດໄດ້ປ່ອຍເພິ່ນອອກມາໃຫ້ເປັນອິດສະຫຼະ. ການຕໍ່ສູ້ໄດ້ສືບຕໍ່ຫຼາຍປີ. ກະສັດຟຣານຊິສຍັງລັງເລຢູ່ລະຫວ່າງຄຣິສຕະຈັກໂຣມ ແລະ ຂະບວນການປະຕິຮູບ, ເພິ່ນຈຶ່ງສະຫຼັບໄປມາລະຫວ່າງການຍົນຍອມ ແລະ ການຢັບຢັ້ງຄວາມກະຕືລືລົ້ນອັນແຮງກ້າຂອງພວກບາດຫຼວງ. ເບີຄວິນຖືກຈັບຂັງຄຸກຢູ່ສາມຄັ້ງ ແຕ່ກະສັດໄດ້ປ່ອຍຕົວທຸກຄັ້ງໄປ ເພາະຟຣານຊິສຊົມເຊີຍຄວາມສະຫຼາດ ແລະ ອຸປະນິໄສອັນດີງາມຂອງເພິ່ນ ຈຶ່ງບໍ່ຍອມໃຫ້ເພິ່ນຕົກເປັນເຫຍື່ອການປອງຮ້າຍຂອງພວກຜູ້ນຳຄຣິສຕະຈັກໂຣມ. *{GC 216.1}*

ເບີຄວິນໄດ້ຮັບການເຕືອນໄພຊ້ຳແລ້ວຊ້ຳອີກເຖິງອັນຕະລາຍທີ່ເພິ່ນຕ້ອງປະເຊີນຢູ່ໃນປະເທດຝຣັ່ງ; ມີຄົນຂໍຮ້ອງໃຫ້ເພິ່ນໜີອອກນອກປະເທດເໝືອນກັບຄົນອື່ນ. ທ່ານ ເອີຣັສມາສ (Erasmus) ເປັນນັກວິຊາການທີ່ເກັ່ງທີ່ສຸດຄົນໜຶ່ງ ແຕ່ເປັນຄົນຂີ້ຂາດ, ເປັນນັກສວຍໂອກາດ ແລະ ເປັນຄົນທີ່ຂາດຄວາມສູງສົ່ງທາງສິນທຳທີ່ຖືວ່າຊີວິດ ແລະ ສັກສີຕ້ອງເປັນຮອງຂອງຄວາມຈິງ. ລາວໄດ້ຂຽນເຖິງເບີຄວິນວ່າ: “ຂໍສະໝັກເປັນທູດຫຼວງປະຈຳປະເທດໃດໜຶ່ງ ຫຼື ວ່າເດີນທາງໄປທ່ຽວເຍຍລະມັນສາ. ເຈົ້າຮູ້ຈັກ ທ່ານ ເບດາ (Beda) ດີວ່າ ລາວເໝືອນຜີສາດມານຮ້າຍທີ່ມີຫົວນັບເປັນພັນຫົວ ແລະ ພົ່ນພິດໄປ

[8] ໄວລີ, ເຫຼັ້ມ 13, ບົດ 9.
[9] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 9.

ທຸກດ້ານ. ສັດຕູຂອງເຈົ້າຊີ້ວ່າກອງທັບຜີມານ. ເຖິງອຸດົມການຂອງເຈົ້າຈະມີຄວາມສຳຄັນກວ່າວຽກງານ ຂອງພຣະເຢຊູຄຣິສເອງກໍຕາມ, ພວກເຂົາຍັງຈະບໍ່ປ່ອຍໃຫ້ເຈົ້າໄປ ຈົນກວ່າເຈົ້າໄດ້ຖືກທຳລາຍໃຫ້ສິ້ນ ຊາກ. ຢ່າໄວ້ວາງໃຈໃນການຄຸ້ມຄອງຂອງກະສັດຫຼາຍເກີນໄປ. ແຕ່ບໍ່ວ່າຈະເກີດຫຍັງຂຶ້ນກໍຕາມ, *ຢ່າໄດ້ ເປີດໂປງຂ້ອຍ*ໃຫ້ກັບຄະນະວິຊາສາສະໜາສາດ."[10] *{GC 216.2}*

ແຕ່ໃນຂະນະທີ່ຄວາມອັນຕະລາຍເພີ່ມຂຶ້ນ, ຄວາມກະຕືລືລົ້ນຂອງເປີຄວິນຍິ່ງຮ້ອນຮົນຂຶ້ນຕາມລຳດັບ. ແທນທີ່ຈະເຮັດຕາມຄຳແນະນຳທີ່ອີງການເມືອງ ແລະ ຫາປະໂຫຍດໃສ່ຕົນເອງຂອງເອີຣັສມາສ, ເພິ່ນ ຕັດສິນໃຈວ່າ ຈະໃຊ້ມາດຕະການທີ່ຫານກ້າກວ່າເດີມ; ເພິ່ນຈະບໍ່ພຽງແຕ່ປົກປ້ອງຄວາມຈິງເທົ່ານັ້ນ ແຕ່ ຈະໂຈມຕີຄວາມເທັດດ້ວຍ. ຂໍ້ກ່າວຫາວ່າເປັນຄົນນອກຮີດທີ່ຄົນໃນຄຣິສຕະຈັກໂຣມພະຍາຍາມມັດຕົວ ເພິ່ນຢູ່ນັ້ນ, ເພິ່ນກໍໂຍນຄືນໃຫ້ພວກເຂົາ. ຜູ້ທີ່ຕໍ່ຕ້ານເພິ່ນຢ່າງຂົມຂື່ນ ແລະ ກະຕືລືລົ້ນທີ່ສຸດ ແມ່ນພວກ ນັກວິຊາການ ແລະ ພວກບາດຫຼວງຂອງພະແນກສາສະໜາສາດໃນມະຫາວິທະຍາໄລແຫ່ງນະຄອນ ປາຣີ ເຊິ່ງເປັນໜຶ່ງໃນສະຖາບັນທີ່ມີອຳນາດສູງສຸດຂອງຄຣິສຕະຈັກໃນນະຄອນນັ້ນ ແລະ ໃນປະເທດ ຝຣັ່ງ. ຈາກການຂຽນຂອງນັກວິຊາການເຫຼົ່ານີ້, ເປີຄວິນໄດ້ຍົກຕົວຢ່າງ 12 ຂໍ້ ເຊິ່ງເພີ່ນປະກາດຢ່າງ ເປີດເຜີຍວ່າ "ກົງກັນຂ້າມກັບພຣະຄຳພີ ແລະ ເປັນຄຳສອນນອກຮີດ." ເພິ່ນຈຶ່ງຂໍຮ້ອງໃຫ້ກະສັດເປັນ ຜູ້ຕັດສິນໃນເລື່ອງນີ້. *{GC 216.3}*

ກະສັດຟຣານຊິສ ປາຖະໜາທີ່ຈະເຫັນຄວາມແຕກຕ່າງລະຫວ່າງຄົນເກັ່ງຂອງທັ້ງສອງຝ່າຍ; ແລະ ໃນຂະນະດຽວກັນ, ກໍຢາກຈະຂະໜາບປາບປາມຄວາມຫຍິ່ງຈອງຫອງຂອງພວກບາດຫຼວງ, ເພິ່ນຈຶ່ງຂໍ ໃຫ້ຄົນຝ່າຍຄຣິສຕະຈັກໂຣມປົກປ້ອງຈຸດຢືນຂອງຕົນຈາກພຣະຄຳພີ. ແຕ່ພວກເຂົາຮູ້ວ່າພຣະຄຳພີເປັນ ອາວຸດທີ່ຈະບໍ່ໃຫ້ຜົນຫຼາຍສຳລັບພວກຕົນ, ເພາະອາວຸດທີ່ພວກເຂົາຖະໜັດຄື ການຄຸມຂັງ, ການ ທໍລະມານ ແລະ ການປະຫານຊີວິດດ້ວຍໄຟ. ບັດນີ້ສະຖານະການກັບປີ້ນຄືນ ແລະ ພວກບາດຫຼວງ ເຫັນວ່າພວກຕົນກຳລັງຈະຕົກໃສ່ຂຸມດັກທີ່ພວກເຂົາເອງໄດ້ຂຸດໄວ້ສຳລັບເປີຄວິນ; ພວກເຂົາຈຶ່ງຂອກຫາ ທາງອອກດ້ວຍຄວາມປະຫຼາດໃຈ. *{GC 217.1}*

ຂໍ້ອ້າງໃນການຂົ່ມເຫັງ

"ໃນເວລານັ້ນພໍດີ ຮູບປັ້ນບາງມາຣີທີ່ຕັ້ງຢູ່ສີ່ແຍກແຫ່ງໜຶ່ງໃນເມືອງ ຖືກທຸບທຳລາຍ" ເຮັດໃຫ້ ຊາວເມືອງແຕກຕື່ນເປັນພິເສດ. ຝູງຊົນພາກັນຫຼັ່ງໄຫຼເຂົ້າມາໃນສະຖານທີ່ເກີດເຫດ ຕ່າງຄົນຕ່າງມີທ່າທີ ໂມໂຫ ແລະ ໂສກເສົ້າ; ກະສັດຟຣານຊິສເອງກໍສະເທືອນໃຈຫຼາຍ. ນີ້ແມ່ນຂໍ້ໄດ້ປຽບທີ່ພວກບາດຫຼວງ ສາມາດໃຊ້ເປັນປະໂຫຍດໄດ້, ພວກເຂົາຈຶ່ງຈັດການຢ່າງໄວວາ. ພວກເຂົາຮ້ອງວ່າ: "ນີ້ແມ່ນໝາກຜົນ ຈາກຄຳສອນຂອງເປີຄວິນ. ທຸກສິ່ງທຸກຢ່າງກຳລັງຈະຖືກໂຄ່ນລົ້ມໂດຍການສົມຮູ້ຮ່ວມຄິດຂອງພວກ ລູເທີແຣນ ບໍ່ວ່າຈະເປັນສາສະໜາ, ກົດໝາຍ, ຫຼື ແມ່ນແຕ່ຣາຊບັນລັງ."[11] *{GC 217.2}*

ເປີຄວິນກໍຖືກຈັບກຸມອີກ. ສ່ວນກະສັດຟຣານຊິສໄດ້ຖອນຕົວອອກຈາກນະຄອນປາຣີ ແລະ ປະ ໃຫ້ພວກບາດຫຼວງເຮັດຕາມໃຈປະສົງ. ເປີຄວິນຖືກສານຕັດສິນປະຫານຊີວິດ ແລະ ຍ້ອນພວກເຂົາ ຢ້ານວ່າກະສັດຟຣານຊິສຈະຊ່ວຍເພິ່ນໃຫ້ລອດ, ພວກເຂົາຈຶ່ງປະຫານເພິ່ນໃນວັນດຽວກັນທີ່ສານຕັດສິນ ນັ້ນເອງ; ຕອນທ່ຽງເປີຄວິນຖືກນຳພາໄປທີ່ແດນປະຫານ. ຄົນຈຳນວນມະຫາສານໄດ້ມາເຕົ້າໂຮມກັນ ເພື່ອເບິ່ງເຫດການນັ້ນ ແລະ ມີຫຼາຍຄົນຕົກໃຈ ແລະ ເກີດຄວາມສົງໄສເມື່ອເຫັນວ່າ ຜູ້ທີ່ຈະຖືກ ປະຫານແມ່ນຄົນຈາກໜຶ່ງໃນຕະກູນທີ່ດີທີ່ສຸດ ແລະ ກ້າຫານທີ່ສຸດ ທ່າມກາງບັນດາຕະກູນຊຸນນາງ

[10] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 9.
[11] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 9.

ຂອງປະເທດຝຣັ່ງ. ຄວາມປະຫຼາດໃຈ, ຄວາມໂກດແຄ້ນ, ການດູຖູກ ແລະ ຄວາມກຽດຊັງຢ່າງຂົ່ມຂື່ນ ປາກົດຢູ່ເທິງໃບໜ້າຂອງຝູງຊົນ; ແຕ່ມີໃບໜ້າຂອງຄົນໜຶ່ງທີ່ສະແດງເຖິງສັນຕິສຸກ. ຄວາມຄິດຂອງຜູ້ທີ່ ກຳລັງຈະສະຫຼະຊີວິດຍ້ອນຄວາມເຊື່ອ ແມ່ນຢູ່ໄກຈາກເຫດການອຸ້ນວາຍທີ່ຢູ່ຮອບຕົວ ເພາະເພິ່ນຮັບຮູ້ ພຽງຢ່າງດຽວວ່າ ອົງພຣະຜູ້ເປັນເຈົ້າຂອງເພິ່ນສະຖິດຢູ່ດ້ວຍໃນເວລານັ້ນ. *{GC 217.3}*

ເບີຄວິນບໍ່ໃສ່ໃຈກັບກຽດອັນຊຸດໂຊມທີ່ເພິ່ນນັ່ງ, ເພິ່ນບໍ່ໄດ້ສົນໃຈໃບໜ້າຂອງຜູ້ຂົ່ມເຫັງ ຫຼື ຄວາມ ຕາຍຢ່າງໜ້າຢ້ານທີ່ລໍຖ້າຢູ່ຂ້າງໜ້າ, ເພາະວ່າພຣະເຢຊູຄຣິສຊົງຢູ່ຄຽງຂ້າງເພິ່ນ. ພຣະອົງຊົງພຣະຊົນ ຢູ່; ພຣະອົງໄດ້ສິ້ນພຣະຊົນ ແລະ ພຣະອົງມີຊີວິດຢູ່ຕະຫຼອດໄປເປັນນິດ; ພຣະອົງຊົງຖືລູກກະແຈ ແຫ່ງຄວາມຕາຍ ແລະ ນະຮົກ. ໃບໜ້າຂອງເບີຄວິນຊື່ນບານດ້ວຍແສງສະຫວ່າງ ແລະ ສັນຕິສຸກ ຈາກສະຫວັນ. ເພິ່ນນຸ່ງເສື້ອຜ້າຊັ້ນດີ ຄື “ເສື້ອຄຸມຜ້າກຳມະຫຍີ່, ເສື້ອຮັດຕົວຜ້າຊາແຕ້ງປະດັບ ລາຍ ແລະ ຖົງຕີນຍາວສີທອງຄຳ.”[12] ເພິ່ນຈະເປັນພະຍານເຖິງຄວາມເຊື່ອຂອງຕົນຕໍ່ໜ້າພຣະມະຫາ ກະສັດຜູ້ຊົງເໜືອກະສັດທັງຫຼາຍ ແລະ ຕໍ່ຈັກກະວານທີ່ກຳລັງເຝົ້າເບິ່ງ; ສະນັ້ນ, ເພິ່ນບໍ່ໃຫ້ມີຮ່ອງຮອຍ ຂອງຄວາມໂສກເສົ້າມາກະທົບຕໍ່ຄວາມຊື່ນຊົມຍິນດີຂອງຕົນ. *{GC 218.1}*

ຂະນະທີ່ຂະບວນເຄື່ອນຍ້າຍໄປຢ່າງຊ້າ ໆ ຜ່ານຖະໜົນຫົນທາງທີ່ເຕັມໄປດ້ວຍຜູ້ຄົນ, ປະຊາຊົນ ຕ່າງຮູ້ສຶກປະຫຼາດໃຈກັບໃບໜ້າ ແລະ ທ່າທີຂອງເພິ່ນທີ່ມີແຕ່ສັນຕິສຸກ ແລະ ຄວາມຊົມຊື່ນຍິນດີ ແຫ່ງໄຊຊະນະ. ພວກເຂົາກ່າວວ່າ: “ລາວເໝືອນຄົນທີ່ນັ່ງຢູ່ໃນພຣະວິຫານ ແລະ ຕຶກຕອງເຖິງສິ່ງ ສັກສິດ.”[13] *{GC 218.2}*

ເມື່ອເຖິງຫຼັກປະຫານ, ເບີຄວິນພະຍາຍາມເວົ້າກັບປະຊາຊົນເລັກນ້ອຍ ແຕ່ພວກບາດຫຼວງຢ້ານ ວ່າຈະເກີດຫຍັງຂຶ້ນຖ້າໃຫ້ເພິ່ນເວົ້າ, ພວກເຂົາຈຶ່ງເລີ່ມຮ້ອງສຽງໂຫວກເຫວກອອກມາ; ໃນຂະນະ ດຽວກັນພວກທະຫານກໍພາກັນຕົບຕີອາວຸດໃຫ້ເກີດສຽງດັງ ຈົນບໍ່ໄດ້ຍິນສຽງຂອງເບີຄວິນ. ດັ່ງນັ້ນ, ໃນ ປີ 1529 ອຳນາດຝ່າຍການສຶກສາ ແລະ ຝ່າຍຄຣິສຕະຈັກທີ່ສູງສຸດຂອງນະຄອນປາຣີ ເຊິ່ງເປັນເມືອງ ແຫ່ງວັດທະນະທຳອັນສີວິໄລນັ້ນ, “ໄດ້ວາງແບບຢ່າງອັນຕ່ຳຊ້າແກ່ປະຊາຊົນແຫ່ງປີ 1793 ທີ່ເຮັດສຽງດັງ ໃນແດນປະຫານ ເພື່ອຈະບໍ່ມີໃຜໄດ້ຍິນຖ້ອຍຄຳອັນສັກສິດຂອງຄົນໃກ້ຈະຕາຍ.”[14] *{GC 218.3}*

ຂ່າວປະເສີດກະຈາຍຍ້ອນຖືກຂົ່ມເຫັງ

ເບີຄວິນຖືກຮັດຄໍຕາຍ ແລ້ວສົບຂອງເພິ່ນກໍຖືກເຜົາດ້ວຍໄຟ. ຂ່າວການເສຍຊີວິດຂອງເພິ່ນເຮັດໃຫ້ ຄົນທີ່ເຫັນດ້ວຍກັບຂະບວນການປະຕິຮູບທົ່ວປະເທດຝຣັ່ງເກີດຄວາມເສົ້າສະຫຼົດໃຈ; ແຕ່ແບບຢ່າງຂອງ ເພິ່ນບໍ່ໄດ້ສູນເປົ່າ. ພວກພະຍານຝ່າຍຄວາມຈິງໄດ້ກ່າວວ່າ, “ພວກເຮົາເອງກໍພ້ອມແລ້ວທີ່ຈະປະເຊີນກັບ ຄວາມຕາຍດ້ວຍໃຈເບີກບານ ໂດຍຕັ້ງຕາເບິ່ງຊີວິດທີ່ຈະມາເຖິງ.”[15] *{GC 218.4}*

ໃນລະຫວ່າງການຂົ່ມເຫັງທີ່ເມືອງໂມນັ້ນ, ຜູ້ທີ່ສອນຕາມຫຼັກການປະຕິຮູບບໍ່ໄດ້ຮັບອະນຸຍາດໃຫ້ ເທດສະໜາ, ພວກເຂົາຈຶ່ງອອກໄປປະກາດໃນບ່ອນອື່ນ. ພໍເວລາຜ່ານໄປຊ່ວງໜຶ່ງທ່ານເລີເຟວ ກໍ ໄດ້ເດີນທາງໄປເຢຍລະມັນ; ສ່ວນແຟໂຣ ກໍກັບຄືນໄປຍັງບ້ານເກີດເມືອງນອນຢູ່ພາກຕາເວັນອອກ ຂອງປະເທດຝຣັ່ງ ເພື່ອປະກາດຄວາມຈິງທີ່ບ້ານຂອງເພິ່ນໃນໄວເດັກ. ຄົນທີ່ນັ້ນໄດ້ຮັບຂ່າວກ່ຽວກັບ ເຫດການຕ່າງ ໆ ເຊິ່ງເກີດຂຶ້ນທີ່ເມືອງໂມ, ແລ້ວກໍມີຄົນຮັບຟັງໃນຂະນະທີ່ເພິ່ນສອນຫຼັກຄວາມຈິງຢ່າງ

[12] ໂດບິນເຍ, *ປະຫວັດການປະຕິຮູບສາສະໜາໃນເອີຣົບໃນສະໄໝຂອງຄາວິນ*, ເຫຼັ້ມ 2, ບົດ 16.
[13] ໄວລີ, ເຫຼັ້ມ 13, ບົດ 9.
[14] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 13, ບົດ 9.
[15] ໂດບິນເຍ, *ປະຫວັດການປະຕິຮູບສາສະໜາໃນເອີຣົບໃນສະໄໝຂອງຄາວິນ*, ເຫຼັ້ມ 2, ບົດ 16.

ກະຕືລືລົ້ນໂດຍບໍ່ຢ້ານກົວຕໍ່ສິ່ງໃດ. ບໍ່ດົນເຈົ້າໜ້າທີ່ກໍລຸກຂຶ້ນເພື່ອຫາທາງຢຸດຢັ້ງແຟໂຣ, ເພິ່ນຈຶ່ງຖືກໄລ່ອອກຈາກເມືອງ. ເຖິງແມ່ນວ່າເພິ່ນບໍ່ສາມາດປະກາດຢ່າງເປີດເຜີຍອີກຕໍ່ໄປ, ແຕ່ເພິ່ນໄດ້ໄປຕາມທົ່ງພຽງ ແລະ ໝູ່ບ້ານເພື່ອສອນຕາມເຮືອນປະຊາຊົນ ແລະ ຕາມທົ່ງນາທີ່ຫ່າງໄກສອກຫຼີກ; ເພິ່ນຕ້ອງຊອກຫາບ່ອນພັກຢູ່ໃນປ່າ ແລະ ໃນຖ້ຳຫີນເຊິ່ງເປັນບ່ອນທີ່ເພິ່ນລ້ຽງເຄີຍຕອນອາຍຸຍັງນ້ອຍ. ພຣະເຈົ້າກຳລັງກຽມເພິ່ນສຳລັບການທົດລອງທີ່ຍິ່ງໃຫຍ່ກວ່ານັ້ນ. ແຟໂຣກ່າວວ່າ: “ຂ້າພະເຈົ້າເຄີຍໄດ້ຮັບການເຕືອນວ່າ ຈະຕ້ອງປະເຊີນກັບໄມ້ກາງແຂນ, ການຂົ່ມເຫັງ ແລະ ອຸບາຍຕ່າງໆຂອງຊາຕານ, ແລ້ວປາກົດວ່າ ສິ່ງເຫຼົ່ານີ້ມີຢູ່ຢ່າງບໍ່ຂາດສາຍ. ມັນຮຸນແຮງເກີນກວ່າທີ່ຂ້າພະເຈົ້າສາມາດແບກຮັບໄດ້ດ້ວຍຕົນເອງ, ແຕ່ພຣະເຈົ້າຊົງເປັນພຣະບິດາຂອງຂ້າພະເຈົ້າ; ພຣະອົງຊົງຈັດຫຼຽມໄວ້ໃຫ້ຂ້າພະເຈົ້າຢູ່ສະເໝີ ແລະ ພຣະອົງຈະຊົງເສີມກຳລັງໃຫ້ຂ້າພະເຈົ້າຕາມທີ່ຂ້າພະເຈົ້າຕ້ອງການ.”[16] *{GC 219.1}*

ເຊັ່ນດຽວກັບສະໄໝຂອງອັກຄະສາວົກ, ການຂົ່ມເຫັງເປັນເຫດໃຫ້ “ຂ່າວປະເສີດແຜ່ຂະຫຍາຍອອກໄປ.” (ຟີລິບປອຍ 1:12). ພວກນັກປະຕິຮູບຖືກຂັບໄລ່ອອກຈາກນະຄອນປາຣີ ແລະ ເມືອງໂມ, ສ່ວນຄົນທີ່ “ກະຈັດກະຈາຍໄປນັ້ນ ຕ່າງກໍໄດ້ປະກາດຂ່າວປະເສີດຕາມບ່ອນຕ່າງໆ.” (ກິດຈະການ 8:4). ດ້ວຍເຫດນີ້, ແສງແຫ່ງຄວາມຈິງ ຈຶ່ງໄດ້ຮັບການປະກາດໄປຍັງຫຼາຍແຂວງທີ່ຫ່າງໄກສອກຫຼີກຂອງປະເທດຝຣັ່ງ. *{GC 219.2}*

ຈອນ ຄາວິນ

ໃນຂະນະນັ້ນພຣະເຈົ້າຍັງຊົງກຽມຜູ້ຮັບໃຊ້ໃຫ້ຂະຫຍາຍວຽກງານຂອງພຣະອົງ. ໃນສະຖານສຶກສາແຫ່ງໜຶ່ງໃນນະຄອນປາຣີ ມີຊາວໜຸ່ມຄົນໜຶ່ງທີ່ມີຄວາມສຸຂຸມຮູ້ຈັກຄິດ. ເພິ່ນສະແດງໃຫ້ເຫັນວ່າເປັນຄົນສະຫຼາດຫຼັກແຫຼມຕັ້ງແຕ່ອາຍຸຍັງນ້ອຍ; ສ່ວນຄວາມບໍຣິສຸດຂອງຊີວິດ ກໍມີຄວາມໂດດເດັ່ນທີ່ບໍ່ໄດ້ນ້ອຍໜ້າເລື່ອງຄວາມຂະຫຍັນໃນການໃຊ້ສະໝອງ ແລະ ການອຸທິດຕົນທາງສາສະໜາ. ບໍ່ດົນຄວາມສະຫຼຽວສະຫຼາດ ແລະ ຄວາມຂະຫຍັນຮຽນເຮັດໃຫ້ເພິ່ນກາຍເປັນທີ່ພາກພູມໃຈຂອງວິທະຍາໄລ, ຄົນທັ້ງຫຼາຍຈຶ່ງມີຄວາມໝັ້ນໃຈວ່າ ຈອນ ຄາວິນ (John Calvin) ຈະກາຍເປັນຜູ້ປົກປ້ອງຄຣິສຕະຈັກໂຣມທີ່ມີຄວາມສາມາດ ແລະ ມີກຽດຫຼາຍທີ່ສຸດຄົນໜຶ່ງ. ແຕ່ມີແສງສະຫວ່າງຈາກສະຫວັນ ສ່ອງທະລຸເຂົ້າໄປໃນກຳແພງແຫ່ງຫຼັກວິຊາການ ແລະ ຄວາມງົມງວາຍທີ່ປິດລ້ອມຄາວິນໄວ້. ເພິ່ນຢ້ານຈົນຕົວສັ່ນເມື່ອໄດ້ຍິນເຖິງຄຳສອນຂອງພວກນັກປະຕິຮູບ, ໂດຍຖືວ່າສົມຄວນແລ້ວທີ່ຈະປະຫານພວກນອກຮີດເຫຼົ່ານັ້ນດ້ວຍການເຜົາໄຟ. ເຖິງຢ່າງໃດກໍຕາມ, ເພິ່ນໄດ້ຖືກນຳມາປະເຊີນໜ້າກັບຄຳສອນນອກຮີດດັ່ງກ່າວໂດຍທີ່ບໍ່ໄດ້ຕັ້ງໃຈ ແລະ ຖືກສະຖານະການບັງຄັບ ໃຫ້ເພິ່ນຕ້ອງທົດສອບນ້ຳໜັກຂອງຫຼັກສາສະໜາສາດຂອງຄຣິສຕະຈັກໂຣມ ໃນການຕໍ່ສູ້ກັບຄຳສອນຂອງຝ່າຍໂປຣແຕັສຕັງ. *{GC 219.3}*

ໃນຂະນະນັ້ນ, ມີລູກອ້າຍລູກນ້ອງຄົນໜຶ່ງຂອງຄາວິນທີ່ເຂົ້າຮ່ວມໃນຂະບວນການປະຕິຮູບຢູ່ທີ່ນະຄອນປາຣີ. ສອງອ້າຍນ້ອງພົບກັນຢູ່ເລື້ອຍໆ ແລະ ສົນທະນາກັນເຖິງເລື່ອງຕ່າງໆທີ່ກຳລັງສ້າງຄວາມວຸ້ນວາຍໃຫ້ກັບບັນດາປະເທດທີ່ນັບຖືສາສະໜາຄຣິສໃນເວລານັ້ນ. ຝ່າຍ ໂອລີເວຕັນ (Olivetan) ຜູ້ເປັນໂປຣແຕັສຕັງກ່າວວ່າ, “ມີແຕ່ສອງສາສະໜາຢູ່ໃນໂລກ: ສາສະໜາປະເພດໜຶ່ງແມ່ນສາສະໜາທີ່ມະນຸດປະດິດຄິດສ້າງເອງ, ເຊິ່ງໃນນັ້ນມະນຸດຊ່ວຍຕົນເອງໃຫ້ລອດໂດຍອາໄສພິທີກຳ ແລະ ການທຳບຸນສຸນທານ. ສ່ວນສາສະໜາອີກປະເພດໜຶ່ງ ແມ່ນສາສະໜາທີ່ໄດ້ຮັບການເປີດເຜີຍໃນພຣະຄຳພີ

[16] ໂດບີນເຍ, *ປະຫວັດການປະຕິຮູບສາສະໜາໃນສະຕະວັດທີ 16*, ເຫຼັ້ມ 12, ບົດ 9.

ເຊິ່ງສອນມະນຸດໃຫ້ຊອກຫາຄວາມລອດພົ້ນຈາກພຣະຄຸນຂອງພຣະເຈົ້າພຽງຢ່າງດຽວ ອັນເປັນພຣະຄຸນທີ່ພຣະອົງປະທານໃຫ້ໂດຍບໍ່ຄິດມູນຄ່າ." {GC 220.1}

ຄາວິນຮ້ອງຂຶ້ນວ່າ: "ຂ້ອຍບໍ່ສົນໃນຄຳສອນໃໝ່ຂອງເຈົ້າເລີຍ. ເຈົ້າຄິດວ່າຂ້ອຍຢູ່ໃນຄວາມເທັດຕະຫຼອດຊີວິດຂອງຂ້ອຍບໍ?"[17] {GC 220.2}

ແຕ່ຄວາມຄິດໃໝ່ເຫຼົ່ານັ້ນໄດ້ເຂົ້າໄປໃນຫົວແລ້ວ ເຊິ່ງເພິ່ນບໍ່ສາມາດລຶບລ້າງມັນອອກໄປໄດ້. ເມື່ອຄາວິນຢູ່ຫ້ອງນອນຄົນດຽວ ເພິ່ນໄດ້ໄຕ່ຕອງເຖິງຖ້ອຍຄຳຂອງພີ່ນ້ອງຂອງເພິ່ນ; ເພິ່ນສຳນຶກໃນຄວາມບາບຂອງຕົນຢ່າງຈັບໃຈ ແລ້ວເພິ່ນກໍຈົມຕະນາການເຖິງສະພາບຂອງຕົນເອງຕໍ່ໜ້າບັນລັງພິພາກສາຂອງພຣະເຈົ້າອົງບໍຣິສຸດໂດຍບໍ່ມີຜູ້ຊ່ວຍອ້ອນວອນແທນ. ບໍ່ວ່າຈະເປັນການໄກ່ເກ່ຍຂອງພວກນັກບຸນ, ການເຮັດບຸນທຳທານ ຫຼື ພິທີກຳທັງຫຼາຍຂອງຄຣິສຕະຈັກ, ສິ່ງເຫຼົ່ານີ້ທັງໝົດລ້ວນແຕ່ບໍ່ສາມາດຊົດໃຊ້ຄວາມບາບໄດ້. ເພິ່ນບໍ່ສາມາດເບິ່ງເຫັນຫຍັງໄດ້ເລີຍ ນອກຈາກຄວາມມືດມົນແຫ່ງຄວາມສິ້ນຫວັງອັນຕະຫຼອດໄປເປັນນິດ. ພວກນັກສາສະໜາສາດຂອງຄຣິສຕະຈັກພະຍາຍາມປອບໃຈເພິ່ນ, ແຕ່ກໍບໍ່ເປັນຜົນ. ຄາວິນສາລະພາບບາບໃຫ້ບາດຫຼວງ ແລະ ບຳເພັນຕົນເພື່ອຊົດໃຊ້ບາບແຕ່ກໍບໍ່ໄດ້ຜົນເຊັ່ນກັນ, ເພາະສິ່ງເຫຼົ່ານີ້ບໍ່ສາມາດນຳຈິດວິນຍານໃຫ້ຄືນດີກັບພຣະເຈົ້າໄດ້. {GC 220.3}

ໃນຂະນະທີ່ຍັງດິ້ນຮົນໂດຍໄຮ້ປະໂຫຍດຢູ່ນັ້ນ, ຄາວິນບັງເອີນໄປທ່ຽວເດີ່ນເມືອງແຫ່ງໜຶ່ງ ແລະ ໄດ້ເຫັນການປະຫານຄົນນອກຣີດຄົນໜຶ່ງດ້ວຍການເຜົາໄຟທີ່ນັ້ນ. ເພິ່ນອັດສະຈັນໃຈ ທີ່ເຫັນໃບໜ້າຂອງຜູ້ທີ່ສະຫຼະຊີວິດຍ້ອນຄວາມເຊື່ອເຕັມໄປດ້ວຍສັນຕິສຸກ. ທ່າມກາງຄວາມທຸກທໍລະມານແຫ່ງຄວາມຕາຍທີ່ໜ້າຢ້ານກົວ ແລະ ພາຍໃຕ້ການກ່າວໂທດຂອງຄຣິສຕະຈັກທີ່ໜ້າຢ້ານກົວກວ່າຄວາມຕາຍເສຍອີກ, ຊາຍຜູ້ນັ້ນໄດ້ສະແດງເຖິງຄວາມເຊື່ອ ແລະ ຄວາມກ້າຫານ ເຊິ່ງນັກສຶກສາໜຸ່ມຄາວິນຮູ້ສຶກເຈັບປວດ ເມື່ອເອົາມາປຽບທຽບກັບຄວາມສິ້ນຫວັງ ແລະ ຄວາມມືດມົວຂອງຕົນເອງ ທີ່ດຳເນີນຊີວິດຕາມຄຳສອນຂອງຄຣິສຕະຈັກຢ່າງເຄັ່ງຄັດທີ່ສຸດ. ເພິ່ນຮູ້ວ່າຄວາມເຊື່ອຂອງພວກນອກຣີດວາງຢູ່ເທິງຮາກຖານຂອງພຣະຄຳພີ, ເພິ່ນຈຶ່ງຕັ້ງໃຈທີ່ຈະສຶກສາພຣະຄຳພີ ແລະ ຖ້າເປັນໄປໄດ້ ຈະຄົ້ນພົບເຄັດລັບແຫ່ງຄວາມຊື່ນຊົມຍິນດີຂອງພວກເຂົາ. {GC 220.4}

ໃນການອ່ານພຣະຄຳພີນັ້ນ ຄາວິນໄດ້ຄົ້ນພົບພຣະຄຣິສ; ເພິ່ນຮ້ອງທູນພຣະເຈົ້າວ່າ: "ໂອ້ພຣະບິດາ, ການສະຫຼະພຣະຊົນຂອງພຣະຄຣິສ ໄດ້ລະງັບພຣະພິໂຣດຂອງພຣະອົງທີ່ມີຕໍ່ຄວາມບາບ; ພຣະໂລຫິດຂອງພຣະຄຣິສໄດ້ຊຳລະລ້າງມົນທິນບາບຂອງຂ້ານ້ອຍ; ໄມ້ກາງແຂນຂອງພຣະຄຣິສໄດ້ແບກຮັບເອົາການຖືກສາບແຊ່ງຂອງຂ້ານ້ອຍ ແລະ ຂ້ານ້ອຍໄດ້ຄືນດີກັບພຣະເຈົ້າ ໂດຍທີ່ພຣະຄຣິສຊົງສິ້ນພຣະຊົນເພື່ອຂ້ານ້ອຍ. ໝູ່ຂ້ານ້ອຍໄດ້ຄິດຄົ້ນເລື່ອງໄຮ້ສາລະຫຼາຍຢ່າງສຳລັບຕົນເອງ ທີ່ບໍ່ມີປະໂຫຍດຫຍັງເລີຍ, ແຕ່ພຣະອົງໄດ້ວາງພຣະຄຳຂອງພຣະອົງໄວ້ຕໍ່ໜ້າຂ້ານ້ອຍ ເໝືອນດັ່ງກະບອງໄຟ. ພຣະອົງຊົງສຳຜັດຈິດໃຈຂອງຂ້ານ້ອຍ ເພື່ອຂ້ານ້ອຍຈະໄດ້ລັງກຽດຄຸນຄວາມດີທັງປວງ ນອກຈາກຄຸນຄວາມດີທີ່ເປັນຂອງພຣະເຢຊູ."[18] {GC 221.1}

ຄາວິນໄດ້ຮັບການສຶກສາເພື່ອເປັນບາດຫຼວງ. ເມື່ອເພິ່ນອາຍຸພຽງ 12 ປີ ເພິ່ນໄດ້ຖືກແຕ່ງຕັ້ງໃຫ້ຮັບຜິດຊອບໂບດນ້ອຍແຫ່ງໜຶ່ງ ແລະ ຫົວຂອງເພິ່ນໄດ້ຖືກເຈົ້າຄະນະໂກນຕາມກົດລະບຽບຂອງຄຣິສຕະຈັກ. ເພິ່ນບໍ່ໄດ້ຮັບການເຈີມຕັ້ງ ແລະ ກໍບໍ່ໄດ້ເຮັດໜ້າທີ່ຂອງບາດຫຼວງ, ແຕ່ເພິ່ນເປັນໜຶ່ງໃນຜູ້ຮັບໃຊ້ຂອງໂບດ ໂດຍມີຕຳແໜ່ງ ແລະ ເງິນເດືອນປະຈຳຕຳແໜ່ງ. {GC 221.2}

[17] ໄວລີ, ເຫຼັ້ມ 13, ບົດ 7.

[18] ມາຕິນ (Martyn), ເຫຼັ້ມ 3, ບົດ 13.

ບັດນີ້ເພິ່ນຮູ້ສຶກວ່າບໍ່ມີວັນທີ່ເພິ່ນຈະສາມາດເປັນບາດຫຼວງໄດ້, ເພິ່ນຈຶ່ງຫັນໄປສຶກສາກົດໝາຍຢູ່ຊ່ວງໜຶ່ງ, ແຕ່ໃນທີ່ສຸດກໍເລີກແຜນການນັ້ນ ໂດຍມີຄວາມຕັ້ງໃຈທີ່ຈະອຸທິດຊີວິດໃຫ້ກັບຂ່າວປະເສີດ. ແຕ່ເພິ່ນລັງເລໃຈທີ່ຈະເປັນຜູ້ສອນແບບອອກໜ້າອອກຕາ. ເພິ່ນເປັນຄົນຂີ້ອາຍຕາມທຳມະຊາດ ແລະ ຮູ້ສຶກວ່າ ຕຳແໜ່ງດັ່ງກ່າວເປັນພາລະທີ່ຕ້ອງຮັບຜິດຊອບຢ່າງໜັກໜ່ວງ; ໃນຂະນະດຽວກັນເພິ່ນກໍຍັງປາຖະໜາທີ່ຈະອຸທິດຕົນເພື່ອການສຶກສາ. ເຖິງຢ່າງໃດກໍຕາມ, ຄຳຂໍຮ້ອງຂອງໝູ່ເພື່ອນສາມາດຊະນະໃຈເພິ່ນໄດ້ໃນທີ່ສຸດ. ເພິ່ນກ່າວວ່າ: “ເປັນເລື່ອງທີ່ໜ້າປະຫຼາດໃຈແທ້ ທີ່ວ່າຄົນທີ່ມີຕົ້ນກຳເນີດອັນຕ່ຳຕ້ອຍຫຼາຍຈະໄດ້ຮັບກຽດອັນຍິ່ງໃຫຍ່ເຊັ່ນນີ້.”[19] *{GC 221.3}*

ຄາວິນເລີ່ມປະກາດ

ຄາວິນເລີ່ມເຮັດວຽກງານຂອງຕົນຢ່າງງຽບ ໆ ແລະ ຄ້ອຍຄຳຂອງເພິ່ນເໝືອນກັບນ້ຳໝອກທີ່ຕົກລົງມາຫົດແຜ່ນດິນໃຫ້ຊຸ່ມຊື່ນ. ເພິ່ນໄດ້ອອກຈາກນະຄອນປາຣີໄປຢູ່ຕ່າງແຂວງໃນເມືອງແຫ່ງໜຶ່ງ ພາຍໃຕ້ການປົກປ້ອງຄຸ້ມຄອງຂອງເຈົ້າຍິງມາກາເຣັດ (Margaret) ຜູ້ທີ່ຮັກຂ່າວປະເສີດ ແລະ ປົກປ້ອງສາວົກແຫ່ງຂ່າວປະເສີດ. ໃນເວລານັ້ນ ຄາວິນຍັງເປັນຊາວໜຸ່ມ, ມີຄວາມອ່ອນໂຍນ, ເປັນຄົນນອບນ້ອມຖ່ອມຕົນບໍ່ອວດໂຕ. ເພິ່ນເລີ່ມປະກາດກັບປະຊາຊົນຢູ່ບ້ານເຮືອນຂອງພວກເຂົາ; ສະມາຊິກຄອບຄົວຈະອ້ອມຮອບເພິ່ນ ໃນຂະນະທີ່ເພິ່ນອ່ານພຣະຄຳພີ ແລະ ເປີດເຜີຍຄວາມຈິງແຫ່ງຄວາມລອດພົ້ນ. ຜູ້ທີ່ໄດ້ຍິນຂ່າວປະເສີດຈຶ່ງນຳໄປເວົ້າໃຫ້ຄົນອື່ນຟັງ; ໃນບໍ່ຊ້າບໍ່ດົນຄາວິນກໍໄດ້ຜ່ານນອກເມືອງ ໄປຍັງບ້ານນ້ອຍໃຫຍ່ໃນຂົງເຂດທີ່ຫ່າງໄກອອກໄປ ເພື່ອສອນຫຼັກຄວາມຈິງທີ່ນັ້ນ. ເພິ່ນສາມາດເຂົ້າເຖິງຄົນໃນຫໍຜາສາດຫີນຂອງພວກຊຸນນາງ ແລະ ໃນກະຕູບນ້ອຍຂອງຄົນຍາກຈົນ; ເພິ່ນຈຶ່ງອອກໄປເພື່ອວາງຮາກຖານຂອງຄຣິສຕະຈັກໃນບ່ອນຕ່າງ ໆ ເຊິ່ງຕໍ່ມາມີຄົນຈາກຄຣິສຕະຈັກເຫຼົ່ານັ້ນ ໄດ້ເປັນພະຍານຝ່າຍຄວາມຈິງໂດຍບໍ່ຢ້ານກົວຕໍ່ສິ່ງໃດ. *{GC 221.4}*

ເມື່ອຜ່ານໄປສອງສາມເດືອນ ເພິ່ນກໍກັບໄປຢູ່ນະຄອນປາຣີອີກ. ເກີດຄວາມປັ່ນປ່ວນຂຶ້ນຢ່າງທີ່ບໍ່ເຄີຍມີມາກ່ອນໃນແວດວົງປັນຍາຊົນ ແລະ ນັກວິຊາການ. ການສຶກສາພາສາບູຮານເປັນເຫດໃຫ້ຄົນຫັນໄປອ່ານພຣະຄຳພີ, ຈົນມີຫຼາຍຄົນທີ່ມັກຖົກປະເດັນຄວາມຈິງໃນພຣະຄຳພີ ແລະ ຍັງໂຕ້ວາທີກັບພວກຫົວຫອກຂອງຄຣິສຕະຈັກໂຣມ, ໃນຂະນະທີ່ຄວາມຈິງເຫຼົ່ານັ້ນຍັງເຂົ້າບໍ່ເຖິງໃຈຂອງຕົນ. ຄາວິນສາມາດຕໍ່ສູ້ໃນເລື່ອງຂໍ້ຂັດແຍ້ງທາງຫຼັກສາສະໜາສາດ, ແຕ່ເພິ່ນມີພາລະກິດທີ່ສູງກວ່າພາລະກິດຂອງພວກນັກວິຊາການທີ່ໂຕ້ຖຽງກັນສຽງດັງ. ຈິດໃຈຂອງຄົນທັງຫຼາຍໄດ້ຮັບການກະຕຸ້ນໃຫ້ຕື່ນຂຶ້ນ, ຈຶ່ງເປັນເວລາເໝາະທີ່ຈະເປີດເຜີຍຄວາມຈິງໃຫ້ແກ່ພວກເຂົາ. ໃນຂະນະທີ່ຕຶກອາຄານຂອງມະຫາວິທະຍາໄລຕ່າງ ໆ ກຳລັງວຸ້ນວາຍຍ້ອນການໂຕ້ຖຽງກັນໃນເລື່ອງຫຼັກສາສະໜາສາດ, ຄາວິນກໍໄປຕາມບ້ານເຮືອນຂອງປະຊາຊົນ ເພື່ອອ່ານພຣະຄຳພີໃຫ້ປະຊາຊົນຟັງ ທັງໄດ້ກ່າວເຖິງພຣະຄຣິສ ແລະ ການທີ່ພຣະອົງຖືກຄຶງໄວ້ທີ່ໄມ້ກາງແຂນ. *{GC 222.1}*

ຕາມການຊີ້ນຳຂອງພຣະເຈົ້າ, ນະຄອນປາຣີຈະຕ້ອງໄດ້ຮັບໂອກາດອີກຄັ້ງໜຶ່ງທີ່ຈະຮັບເອົາຂ່າວປະເສີດ. ຄຳເຊື້ອເຊີນຂອງເລີເຟວ ແລະ ແຟໂຣໄດ້ຖືກປະຕິເສດ, ແຕ່ຊາວມະຫານະຄອນປາຣີທຸກຊົນຊັ້ນ ຈະມີໂອກາດຮັບຟັງຂ່າວປະເສີດອີກຄັ້ງໜຶ່ງ. ໃນຂະນະນັ້ນກະສັດຍັງພິຈາລະນາຜົນປະໂຫຍດໃນດ້ານການເມືອງ ຈຶ່ງຍັງບໍ່ທັນໄດ້ເຂົ້າຂ້າງຄຣິສຕະຈັກໂຣມຢ່າງເຕັມທີ່ໃນການຕໍ່ສູ້ກັບຂະບວນການປະຕິຮູບ. ເຈົ້າຍິງມາກາເຣັດຍັງຄົງເຝົ້າຫວັງວ່າ ຄຳສອນຝ່າຍໂປຣແຕັສຕັງຈະສາມາດຊະນະໃຈຄົນໃນ

[19] ໄວລີ, ເຫຼັ້ມ 13, ບົດ 9.

ປະເທດຝຣັ່ງ. ນາງຈຶ່ງຕັດສິນໃຈຢ່າງແນ່ວແນ່ວ່າ ຫຼັກຄຳສອນຂອງຂະບວນການປະຕິຮູບນັ້ນ ຈະຕ້ອງໄດ້ຮັບການປະກາດໃນນະຄອນປາຣີ. ໃນລະຫວ່າງທີ່ກະສັດບໍ່ຢູ່ ນາງໄດ້ສັ່ງໃຫ້ສາສະໜາຈານໂປຣແຕັສຕັງຄົນໜຶ່ງໄປເທດສະໜາຕາມໂບດຕ່າງ ໆ ໃນນະຄອນດັ່ງກ່າວ. ແຕ່ເມື່ອເຈົ້າໜ້າທີ່ຝ່າຍສັນຕະປາປາຫ້າມ ບໍ່ອະນຸຍາດໃຫ້ໃຊ້ໂບດ, ເຈົ້າຍິງມາກາເຣັດຈຶ່ງເປີດປະຕູພຣະຣາຊວັງໃຫ້ຄົນມາຟັງຂ່າວປະເສີດ. ມີການຈັດຕຽມຫ້ອງໜຶ່ງໄວ້ເປັນຫ້ອງນະມັດສະການ ແລະ ມີການປະກາດວ່າຈະມີການເທດສະໜາທຸກມື້ຕາມເວລາທີ່ກຳນົດໄວ້, ຜູ້ຄົນຈາກທຸກລະດັບຊັ້ນໄດ້ຖືກເຊື້ອເຊີນໃຫ້ໄປຮ່ວມ. ມີຄົນຈຳນວນຫຼວງຫຼາຍພາກັນໄປຟັງ, ບໍ່ພຽງແຕ່ຫ້ອງທີ່ຈັດໄວ້ເທົ່ານັ້ນ ແຕ່ຫ້ອງໃກ້ຄຽງ ແລະ ທາງເດີນກໍເຕັມໄປດ້ວຍຜູ້ຄົນ. ຫຼາຍພັນຄົນມາເຕົ້າໂຮມກັນໃນແຕ່ລະມື້ ຮວມທັງພວກຂຸນນາງ, ລັດຖະບຸລຸດ, ນັກກົດໝາຍ, ພໍ່ຄ້າ ແລະ ຊ່າງຝີມື. ແທນທີ່ກະສັດຈະຫ້າມການປະຊຸມດັ່ງກ່າວ ເພິ່ນພັດສັ່ງໃຫ້ເປີດໂບດສອງແຫ່ງໃນນະຄອນປາຣີ. ຊາວເມືອງບໍ່ເຄີຍຊາບຊຶ້ງໃນພຣະຄຳຂອງພຣະເຈົ້າເໝືອນໃນຄັ້ງນີ້, ເໝືອນກັບວ່າພະລັງແຫ່ງຊີວິດຈາກສະຫວັນໄດ້ດົນຈິດດົນໃຈປະຊາຊົນ. ຄວາມບໍຣິສຸດ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມຂະຫຍັນໝັ່ນພຽນ ແລະ ການຮູ້ຈັກບັງຄັບຕົນກຳລັງເຂົ້າໄປແທນທີ່ການເມົາເຫຼົ້າ, ການປ່ອຍຕົວຕາມກິເລດຕັນຫາ, ການຜິດຖຽງກັນ ແລະ ການຢູ່ລ້າບໍ່ເກີດປະໂຫຍດ. {GC 222.2}

ແຕ່ພວກຜູ້ນຳຂອງຄຣິສຕະຈັກໂຣມບໍ່ໄດ້ຢູ່ລ້າ; ເມື່ອກະສັດຍັງບໍ່ຍອມຫ້າມການເທດສະໜາ, ພວກເຂົາຈຶ່ງຫັນໄປປຸກປັ່ນປະຊາຊົນ. ພວກເຂົາເຮັດທຸກສິ່ງທຸກຢ່າງທີ່ເຮັດໄດ້ ເພື່ອຍຸຍົງຝູງຊົນທີ່ງົມງວາຍ ແລະ ຂາດຄວາມຮູ້ ໃຫ້ເກີດຄວາມຢ້ານກົວ, ອະຄະຕິ ແລະ ຄວາມຄັ່ງແຄ້ນ. ຊາວເມືອງນະຄອນປາຣີຫຼັບໜູຫຼັບຕາເຮັດຕາມຜູ້ສອນທຳເທັດ ຈຶ່ງບໍ່ຕ່າງຫຍັງກັບນະຄອນເຢຣູຊາເລັມໃນສະໄໝເກົ່າກ່ອນ ທີ່ບໍ່ຮູ້ວ່າພຣະ-ເຈົ້າໄດ້ສະເດັດມາຢ້ຽມຢາມ ແລະ ບໍ່ຮູ້ເຖິງສິ່ງທີ່ເຮັດໃຫ້ຕົນຢູ່ເຢັນເປັນສຸກ. ພຣະຄຳຂອງພຣະເຈົ້າໄດ້ຮັບການປະກາດໃນນະຄອນຫຼວງເປັນເວລາສອງປີ; ຢ່າງໃດກໍຕາມ, ເຖິງແມ່ນວ່າມີຫຼາຍຄົນຮັບເຊື່ອໃນຂ່າວປະເສີດ ແຕ່ຄົນສ່ວນຫຼາຍໄດ້ປະຕິເສດ. ກະສັດຟຣານຊິສໄດ້ທຳທ່າເປັນຄົນໃຈກວ້າງ ແລະ ຍອມຮັບທຸກຝ່າຍພຽງເພື່ອໃຫ້ເປັນໄປຕາມຈຸດປະສົງຂອງຕົນເອງ, ພວກຝ່າຍສັນຕະປາປາຈຶ່ງໄດ້ຮັບອຳນາດຄືນໃໝ່; ໂບດທັງຫຼາຍກໍຖືກປິດລົງອີກຄັ້ງໜຶ່ງ ແລະ ມີການປັກຫຼັກປະຫານຂຶ້ນມາອີກ. {GC 223.1}

ຕ້ອງຫຼົບໜີ

ໃນເວລານັ້ນ, ຄາວິນສືບຕໍ່ເຜີຍແຜ່ແສງສະຫວ່າງຢູ່ນະຄອນປາຣີ ໃນຂະນະທີ່ກະກຽມຕົນເອງສຳລັບວຽກງານໃນອະນາຄົດໂດຍການສຶກສາ, ການຄິດຕຶກຕອງ ແລະ ການອະທິຖານ. ເຖິງຢ່າງໃດກໍຕາມ, ໃນທີ່ສຸດເພິ່ນກໍຕົກເປັນເປົ້າຄວາມສົງໄສຂອງເຈົ້າໜ້າທີ່. ພວກເຂົາຕັ້ງໃຈທີ່ຈະປະຫານຊີວິດເພິ່ນດ້ວຍການເຜົາໄຟໃຫ້ໄດ້. ຄາວິນຖືວ່າຕົນເອງມີຄວາມປອດໄພ ເພາະໄດ້ແຍກຕົວຢູ່ຢ່າງສັນໂດດ ຈຶ່ງບໍ່ຄິດກັງວົນເຖິງໄພອັນຕະລາຍ; ແລ້ວມີເຫດການເກີດຂຶ້ນກະທັນຫັນ, ໝູ່ເພື່ອນບາງຄົນຂອງຄາວິນແລ່ນເຂົ້າມາໃນຫ້ອງພ້ອມດ້ວຍຂ່າວວ່າ ເຈົ້າໜ້າທີ່ກຳລັງເດີນທາງມາເພື່ອຈັບກຸມເພິ່ນ. ໃນທັນໃດນັ້ນໄດ້ຍິນສຽງເຄາະປະຕູດັງຢູ່ທາງເຂົ້າດ້ານນອກ, ພວກເຂົາຈະຕ້ອງຟ້າວຢ່າງຮີບດ່ວນ ໂດຍບໍ່ເສຍເວລາແມ່ນແຕ່ວິນາທີດຽວ. ເພື່ອນຂອງເພິ່ນບາງຄົນໄດ້ຖ່ວງເວລາເຈົ້າໜ້າທີ່ຢູ່ທີ່ປະຕູ, ສ່ວນຄົນອື່ນກໍຊ່ວຍປ່ອນເພິ່ນລົງຈາກປ່ອງຢ້ຽມ, ແລ້ວເພິ່ນກໍເດີນທາງໄປນອກເມືອງຢ່າງໄວວາ. ຄາວິນໄປລີ້ຢູ່ໃນກະຕູບຂອງຊາວນາທີ່ເປັນມິດກັບຂະບວນການປະຕິຮູບ ແລະ ປອມຕົວໂດຍການໃສ່ເສື້ອຜ້າຂອງຊາວນາຜູ້ນັ້ນ, ຈັບກ້ານຈັກ

ຂຶ້ນມາແບກ ແລ້ວກໍອອກເດີນທາງມຸ່ງໜ້າໄປທາງໃຕ້ ຈົນໄດ້ພົບບ່ອນລີ້ໄພອີກໃນເຂດຄອບຄອງຂອງເຈົ້າ ຍິງມາກາເຣັດ.[20] {GC 223.2}

ຄາວິນຢູ່ຕໍ່ຢ່າງປອດໄພທີ່ນັ້ນເປັນເວລາສອງສາມເດືອນ ແລະ ຕັ້ງໜ້າຕັ້ງຕາສຶກສາຄົ້ນຄວ້າເໝືອນທີ່ຜ່ານມາ ພາຍໃຕ້ການປົກປ້ອງຂອງໝູ່ເພື່ອນທີ່ມີອິດທິພົນ. ແຕ່ເປົ້າປະສົງຂອງເພິ່ນແມ່ນການປະກາດຂ່າວປະເສີດໃຫ້ທົ່ວເຖິງປະເທດຝຣັ່ງ, ເພິ່ນຈຶ່ງບໍ່ສາມາດຢູ່ໄດ້ດົນໂດຍບໍ່ອອກໄປປະກາດ. ທັນທີທີ່ພະຍຸແຫ່ງການຂົ່ມເຫັງເບົາລົງເລັກນ້ອຍ, ເພິ່ນໄດ້ຊອກຫາບ່ອນເຮັດວຽກໃໝ່ທີ່ເມືອງພົວເຈ (Poitiers), ເປັນເມືອງທີ່ມີມະຫາວິທະຍາໄລ ແລະ ເປັນບ່ອນທີ່ມີການຕອບຮັບຕໍ່ຄຳສອນຂອງພວກນັກປະຕິຮູບເປັນຢ່າງດີ; ຄົນຈາກທຸກຊົນຊັ້ນໃນສັງຄົມໄດ້ຮັບຟັງຂ່າວປະເສີດດ້ວຍຄວາມຍິນດີ. ບໍ່ມີການເທດສະໜາປະກາດຢ່າງເປີດເຜີຍ, ແຕ່ຄາວິນໄດ້ສອນຖ້ອຍຄຳແຫ່ງຊີວິດນິຣັນໃຫ້ແກ່ຜູ້ທີ່ຢາກຟັງ, ບາງຄັ້ງແມ່ນຢູ່ໃນເຮືອນຂອງເຈົ້າເມືອງ, ບາງຄັ້ງແມ່ນຢູ່ບ່ອນພັກຂອງເພິ່ນເອງ ແລະ ບາງຄັ້ງກໍຢູ່ໃນສວນສາທາລະນະ. ເມື່ອເວລາຜ່ານໄປ ແລະ ຈຳນວນຜູ້ຟັງເພີ່ມຂຶ້ນ, ພວກເຂົາຄິດວ່າຄົງມີຄວາມປອດໄພກວ່າ ຖ້າເຕົ້າໂຮມກັນຢູ່ນອກເມືອງ. ມີຖ້ຳແຫ່ງໜຶ່ງຢູ່ຂ້າງເຫວແຄບຖືກເລືອກໃຫ້ເປັນສະຖານທີ່ປະຊຸມ; ຖ້ຳແຫ່ງນີ້ຖືກປິດບັງໄວ້ດ້ວຍຕົ້ນໄມ້ ແລະ ຫີນທີ່ຍື່ນລົງມາ ຈຶ່ງເປັນບ່ອນສອກຫຼີກທີ່ຫາຍາກ. ກຸ່ມຄົນນ້ອຍໆ ຫຼາຍກຸ່ມພາກັນອອກຈາກເມືອງເພື່ອໄປຮ່ວມປະຊຸມ ໂດຍແຕ່ລະກຸ່ມໃຊ້ເສັ້ນທາງທີ່ແຕກຕ່າງກັນ. ໃນທີ່ລັບຕາຄົນແຫ່ງນີ້ມີການນຳພຣະຄຳພີມາອ່ານອອກສຽງ ແລະ ອະທິບາຍໃຫ້ຄົນຟັງ. ຊາວໂປຣແຕັສຕັງໃນປະເທດຝຣັ່ງໄດ້ສະຫຼອງການລະນຶກເຖິງອາຫານຄ່ຳສຸດທ້າຍຂອງພຣະເຢຊູເປັນຄັ້ງທຳອິດໃນຖ້ຳແຫ່ງນີ້ເອງ ແລະ ມີການສົ່ງພວກນັກປະກາດທີ່ສັດຊື່ອອກໄປຈາກຄຣິສຕະຈັກນ້ອຍໆແຫ່ງນີ້. {GC 224.1}

ແລ້ວຄາວິນກໍກັບຄືນໄປຍັງນະຄອນປາຣີອີກ, ຍ້ອນວ່າເພິ່ນຍັງບໍ່ສາມາດເລີກຄວາມຫວັງທີ່ວ່າປະເທດຝຣັ່ງທັງຊາດຈະຮັບເອົາຄຳສອນຂອງຂະບວນການປະຕິຮູບ, ແຕ່ເພິ່ນພົບວ່າບໍ່ຄ່ອຍມີໂອກາດປະກາດເລີຍ. ການສອນຂ່າວປະເສີດແມ່ນຫົນທາງໄປສູ່ຫຼັກປະຫານໂດຍກົງ, ໃນທີ່ສຸດເພິ່ນຈຶ່ງຕັດສິນໃຈອອກເດີນທາງໄປປະເທດເຢຍລະມັນ. ຫຼັງຈາກຄາວິນອອກຈາກປະເທດຝຣັ່ງບໍ່ດົນ ມີພະຍຸແຫ່ງການກົດຂີ່ຂົ່ມເຫັງພັດຖະຫຼົ່ມໃສ່ຊາວໂປຣແຕັສຕັງ ເຊິ່ງຖ້າເພິ່ນຍັງຢູ່ໃນຄາວນັ້ນ ເພິ່ນກໍຄົງໄດ້ຖືກທຳລາຍພ້ອມກັບຄົນອື່ນຢ່າງແນ່ນອນ. {GC 224.2}

ຄວາມກະຕືລືລົ້ນທີ່ຂາດຄວາມຮອບຄອບ

ພວກນັກປະຕິຮູບຝຣັ່ງມີຄວາມກະຕືລືລົ້ນທີ່ຈະເຫັນປະເທດຂອງຕົນກ້າວໜ້າໃນການປະຕິຮູບໃຫ້ທັນກັບປະເທດເຢຍລະມັນ ແລະ ສວິສເຊີແລນ, ຈຶ່ງຕັ້ງໃຈໂຈມຕີຄວາມງົມງວາຍຂອງຄຣິສຕະຈັກໂຣມຢ່າງຮຸນແຮງ ເພື່ອໃຫ້ຄົນທັງຊາດຕື່ນຕົວຂຶ້ນມາ. ສະນັ້ນ, ໃນຄືນໜຶ່ງ ພວກເຂົາຈຶ່ງພາກັນຕິດແຜ່ນປ້າຍທົ່ວປະເທດຝຣັ່ງ ໂຈມຕີພິທີສິນລະນຶກຂອງກາໂຕລິກ. ແຕ່ແທນທີ່ຈະຊ່ວຍໃຫ້ຂະບວນການປະຕິຮູບກ້າວໄປຂ້າງໜ້າ, ການເຄື່ອນໄຫວທີ່ຫານກ້າແຕ່ຂາດຄວາມຮອບຄອບນັ້ນ ໄດ້ນຳຄວາມພິນາດມາ ບໍ່ພຽງແຕ່ໃສ່ພວກທີ່ຢູ່ເບື້ອງຫຼັງການຕິດປ້າຍເຫຼົ່ານັ້ນ ແຕ່ໃຫ້ຄົນທັງຫຼາຍທີ່ເປັນມິດກັບຂະບວນການປະຕິຮູບທົ່ວປະເທດຝຣັ່ງດ້ວຍ. ເຫດການໃນຄັ້ງນີ້ເຮັດໃຫ້ພວກຝ່າຍຄຣິສຕະຈັກໂຣມໄດ້ໃນສິ່ງທີ່ພວກເຂົາປາຖະໜາມາດົນນານ ຄືຂໍ້ອ້າງໃນການຮຽກຮ້ອງໃຫ້ທຳລາຍພວກນອກຮີດໃຫ້ໝົດສິ້ນ ໃນຖານເປັນພວກທີ່ຍຸຍົງປັ່ນປ່ວນ ແລະ ເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງແຫ່ງຣາຊບັນລັງ ແລະ ຕໍ່ຄວາມສະຫງົບສຸກຂອງປະເທດຊາດບ້ານເມືອງ. {GC 224.3}

[20] ເບິ່ງ ໂດບິນເຍ, *ປະຫວັດການປະຕິຮູບສາສະໜາໃນເອີຣົບໃນສະໄໝຂອງຄາວິນ*, ເຫຼັ້ມ 2, ບົດ 30.

ມີມືລັບນຳແຜ່ນປ້າຍອັນໜຶ່ງມາຕິດໄວ້ທີ່ປະຕູຫ້ອງນອນຂອງກະສັດ ໂດຍບໍ່ມີຜູ້ໃດຮູ້ວ່າແມ່ນໃຜ ເຮັດ, ອາດຈະເປັນໝູ່ມິດທີ່ຂາດຄວາມຮອບຄອບ ຫຼື ເປັນສັດຕູເຈົ້າເລ່; ຢ່າງໃດກໍຕາມ, ກະສັດກໍຕົກໃຈ ຢ້ານ. ໃນແຜ່ນປ້າຍດັ່ງກ່າວ, ຄວາມງົມງວາຍຕ່າງ ໆ ທີ່ໄດ້ຮັບຄວາມເຄົາລົບນັບຖືເປັນເວລາຫຼາຍຮ້ອຍ ປີ ກໍໄດ້ຖືກໂຈມຕີຢ່າງໄຮ້ປານີ. ການທີ່ມີຄົນບັງອາດນຳຖ້ອຍຄຳທີ່ແຈ່ມແຈ້ງ ແຕ່ໜ້າຕົກໃຈເຫຼົ່ານີ້ ເຂົ້າໄປ ເຖິງຫ້ອງນອນຂອງກະສັດ ເຮັດໃຫ້ເພີ່ນໂມໂຫເປັນຟືນເປັນໄຟ. ເພີ່ນຢືນກືກ ປາກບໍ່ອອກ ແລະ ຕົວສັ່ນ ຢູ່ພັກໜຶ່ງດ້ວຍອາການຕົກຕະລຶງ; ແລ້ວດ້ວຍຄວາມໂມໂຫຢ່າງຮຸນແຮງ ເພີ່ນຈຶ່ງລັ່ນວາຈາທີ່ຮ້າຍກາດ ວ່າ: “ໃຫ້ຈັບທຸກຄົນທີ່ສົງໄສວ່າຮັບເຊື່ອໃນຄຳສອນນອກຮີດຂອງລູເທີໂດຍບໍ່ໄວ້ໜ້າ. ເຮົາຈະຂ້າພວກມັນ ໃຫ້ໝົດກ້ຽງ.”[21] ແບບນີ້ກໍກັບລຳບໍ່ໄດ້ແລ້ວ, ກະສັດໄດ້ຕັ້ງໃຈຢ່າງເດັດດ່ຽວທີ່ຈະເຂົ້າຂ້າງຄຣິສຕະຈັກໂຣມ ຢ່າງເຕັມທີ່. *{GC 225.1}*

ມີການອອກມາດຕະການທັນທີເພື່ອຈັບກຸມທຸກຄົນໃນນະຄອນປາຣີທີ່ຮັບເອົາຄຳສອນຂອງລູເທີ. ມີ ຊ່າງຝີມືຜູ້ທຸກຍາກຄົນໜຶ່ງ ແລະ ເປັນຜູ້ຮັບເຊື່ອໃນຄຳສອນຂອງພວກນັກປະຕິຮູບ; ຄົນນີ້ເຄີຍເຮັດໜ້າທີ່ ເອີ້ນຜູ້ເຊື່ອທັ້ງຫຼາຍໃຫ້ໄປຮ່ວມປະຊຸມນະມັດສະການຢ່າງລັບ ໆ. ມາບັດນີ້ລາວກໍຖືກຈັບ ແລະ ຖືກຂົ່ມຂູ່ ວ່າຈະຖືກປະຫານຊີວິດດ້ວຍການເຜົາໄຟຖ້າບໍ່ຮ່ວມມື; ພວກເຈົ້າໜ້າທີ່ໄດ້ສັ່ງລາວໃຫ້ນຳຕົວແທນຂອງ ສັນຕະປາປາໄປທີ່ເຮືອນຊາວໂປຣແຕັສຕັງທຸກຄົນໃນເມືອງ. ໃນຕອນທຳອິດລາວຕົກໃຈຢ້ານ ແລະ ບໍ່ຢາກ ເຮັດ, ແຕ່ໃນທີ່ສຸດຍ້ອນລາວຢ້ານແປວໄຟ ຈຶ່ງຍອມທໍລະຍົດຕໍ່ພີ່ນ້ອງຂອງຕົນ. ມີການຈັດຂະບວນ ໂດຍ ໃຫ້ເຂົ້າຈີ່ທີ່ໃຊ້ໃນພິທີສິນລະນຶກນຳໜ້າຂະບວນ ຕາມດ້ວຍຜູ້ທໍລະຍົດ ແລະ ພວກບາດຫຼວງ, ພວກ ຄົນເຜົາເຄື່ອງຫອມ, ບັນດານັກບວດ, ພວກທະຫານ ແລະ ທ້າວ ໂມຣິນ ຜູ້ເປັນນັກສືບສວນຂອງ ກະສັດ. ຄົນເຫຼົ່ານີ້ເດີນຂະບວນຢ່າງມິດງຽບຜ່ານຖະໜົນຫົນທາງໃນເມືອງ ໂດຍອ້າງວ່າກຳລັງໃຫ້ ກຽດແກ່ພິທີ “ສິນລະນຶກອັນສັກສິດ” ດ້ວຍການລຶບລ້າງຄວາມຜິດທີ່ພວກໂປຣແຕັສຕັງໄດ້ດູຖູກພິທີ ດັ່ງກ່າວ; ແຕ່ພິທີຕົບຕານີ້ໄດ້ເຊື່ອງຊ່ອນການມຸ່ງເອົາຊີວິດ. ເມື່ອຂະບວນມາຮອດຈຸດກົ້ງກັນຂ້າມກັບເຮືອນ ຂອງຜູ້ທີ່ເຊື່ອຕາມຄຳສອນຂອງລູເທີ ຜູ້ທໍລະຍົດຈະເຮັດສັນຍານດ້ວຍມື ແຕ່ບໍ່ເວົ້າສິ່ງໃດເລີຍ. ຂະບວນ ແຫ່ນັ້ນກໍຈະຢຸດທີ່ນັ້ນ, ເຈົ້າໜ້າທີ່ຈະບຸກເຂົ້າໄປໃນເຮືອນ, ຄອບຄົວຈະຖືກລາກອອກມາ ແລະ ຖືກມັດ ໂສ້, ແລ້ວຂະບວນນັ້ນກໍຈະອອກເດີນທາງຕໍ່ເພື່ອຊອກຫາເຫຍື່ອກຸ່ມໃໝ່. ພວກເຂົາ “ບໍ່ລະເວັ້ນເຮືອນ ຫຼັງໃດບໍ່ວ່າໃຫຍ່ ຫຼື ນ້ອຍ, ແມ່ນແຕ່ໃນຄະນະຕ່າງ ໆ ຂອງມະຫາວິທະຍາໄລແຫ່ງນະຄອນປາຣີກໍບໍ່ ເວັ້ນ.... ທ້າວ ໂມຣິນ ເຮັດໃຫ້ຄົນທັ່ງເມືອງສັ່ນສະທ້ານ.... ເປັນຍຸກສະໄໝທີ່ຄວາມໂຫດຫ້ຽມສະຫຍອງ ຂວັນຄອງເມືອງ.”[22] *{GC 225.2}*

ເຫຍື່ອຜູ້ເຄາະຮ້າຍຖືກປະຫານຊີວິດດ້ວຍການທໍລະມານທີ່ໂຫດຮ້າຍທາລຸນ; ມີການອອກຄຳສັ່ງໃຫ້ ຜ່ອນໄຟລົງເປັນພິເສດ ເພື່ອຍືດເວລາແຫ່ງຄວາມເຈັບປວດ. ແຕ່ຄົນເຫຼົ່ານີ້ຕາຍໃນຖານະຜູ້ມີໄຊຊະນະ ໂດຍຄວາມເຊື່ອໝັ້ນບໍ່ຫວັ່ນໄຫວ ແລະ ສັນຕິສຸກໃນໃຈບໍ່ໄດ້ຮັບການກະທົບໃຫ້ໝອງໝົ່ນ. ພວກຜູ້ທີ່ ຂົ່ມເຫັງພັດຮູ້ສຶກວ່າ ຕົນເປັນຝ່າຍທີ່ເສຍໄຊ ເພາະບໍ່ສາມາດທຳລາຍຄວາມຢືນຢັດຂອງຄົນເຫຼົ່ານັ້ນ ໄດ້. “ມີການປັກຫຼັກປະຫານທົ່ວທຸກບ່ອນຂອງນະຄອນປາຣີ ແລະ ມີການເຜົາປະຫານສືບຕໍ່ບໍ່ເວັ້ນ ແຕ່ລະມື້ ໂດຍມຸ່ງຫວັງໃຫ້ປະຊາຊົນຢ້ານກົວຄຳສອນນອກຮີດ ດ້ວຍການກະຈາຍການປະຫານໄປ ທົ່ວທຸກບ່ອນ. ແຕ່ສຸດທ້າຍຝ່າຍຂ່າວປະເສີດຍັງຄົງເປັນຝ່າຍທີ່ໄດ້ປຽບ, ເພາະເຫດການນີ້ເຮັດໃຫ້ຊາວ ນະຄອນປາຣີທັ້ງໝົດເຫັນວ່າ ຄຳສອນໃໝ່ສາມາດສ້າງຄົນແບບໃດ. ບໍ່ມີທຳມາດແຫ່ງໃດທີ່ມີການ ປະກາດໄດ້ຜົນເທົ່າກັບຫຼັກປະຫານຂອງຜູ້ທີ່ສະຫຼະຊີວິດເພື່ອຄວາມເຊື່ອ. ໃບໜ້າຂອງຄົນເຫຼົ່ານີ້ທີ່

[21] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 4, ບົດ 10.
[22] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 4, ບົດ 10.

ສະແດງເຖິງສັນຕິສຸກ ແລະ ຄວາມປິຕິຍິນດີໃນຂະນະທີ່ເດີນທາງໄປຍັງ . . . ແດນປະຫານ, ວິລະກຳ ຂອງພວກເຂົາໃນຂະນະທີ່ຢືນຢູ່ທ່າມກາງແປວໄຟອຳມະຫິດ ແລະ ການໃຫ້ອະໄພຢ່າງອ່ອນສຸພາບຕໍ່ຜູ້ທີ່ ທຳຮ້າຍພວກເຂົາ; ສິ່ງເຫຼົ່ານີ້ປ່ຽນທ່າທີຂອງຄົນຈຳນວນຫຼາຍທີ່ສັງເກດເຫດການ ຈາກຄວາມຄຽດແຄ້ນ ໃຫ້ກາຍເປັນຄວາມສົງສານ ແລະ ຈາກຄວາມກຽດຊັງໃຫ້ເປັນຄວາມຮັກ. ແບບຢ່າງຂອງຜູ້ທີ່ຖືກປະຫານ ສະເໝີອນວາຈາທີ່ຄົມຄາຍ ເຊິ່ງອ້ອນວອນໃຫ້ຄົນມາຮັບເຊື່ອໃນຂ່າວປະເສີດ.”[23] {GC 226.1}

ສ່ວນພວກບາດຫຼວງຍັງຄົງມຸ່ງໝັ້ນໃຫ້ປະຊາຊົນຄຽດແຄ້ນຕໍ່ໄປ ຈຶ່ງປ່ອຍຂໍ້ກ່າວຫາຕໍ່ພວກໂປຣແຕັສ-ຕັງທີ່ຮ້າຍແຮງທີ່ສຸດ. ມີການກ່າວຫາວ່າ ຝ່າຍພວກປະຕິຮູບໄດ້ວາງແຜນສັງຫານພວກກາໂຕລິກ, ແລ້ວ ຈະໂຄ່ນລົ້ມລັດຖະບານ ແລະ ລອບສັງຫານກະສັດ. ພວກບາດຫຼວງບໍ່ມີຫຼັກຖານສະໜັບສະໜູນ ຂໍ້ກ່າວຫາດັ່ງກ່າວແມ່ນແຕ່ໜ້ອຍ; ເຖິງຢ່າງໃດກໍດີ, ໃນທີ່ສຸດຄຳທຳນວາຍເລື່ອງຮ້າຍນັ້ນໄດ້ສຳເລັດເປັນ ຈິງ, ແຕ່ເປັນການສຳເລັດພາຍໃຕ້ສະຖານະການທີ່ແຕກຕ່າງກັນ ແລະ ຈາກສາເຫດທີ່ກົງກັນຂ້າມກັບ ຂໍ້ກ່າວຫາ. ການທີ່ຝ່າຍກາໂຕລິກປະຕິບັດຕໍ່ພວກໂປຣແຕັສຕັງຜູ້ໄຮ້ຄວາມຜິດຢ່າງໂຫດຮ້າຍນັ້ນ ໄດ້ ສະສົມໂທດໄວ້ຢ່າງໜັກໜ່ວງ, ເຊິ່ງຫຼາຍສະຕະວັດຕໍ່ມາ ກໍໄດ້ນຳຄວາມພິນາດມາສູ່ກະສັດພ້ອມດ້ວຍ ການປົກຄອງ ແລະ ປະຊາຊົນຂອງເພິ່ນຕາມທີ່ທຳນວາຍໄວ້, ແຕ່ຄວາມພິນາດດັ່ງກ່າວເກີດຈາກພວກທີ່ ບໍ່ເຊື່ອພຣະເຈົ້າ ແລະ ຈາກພວກຝ່າຍສັນຕະປາປາເອງ. ມັນບໍ່ແມ່ນການເຜີຍແຜ່ຫຼັກໂປຣແຕັສຕັງທີ່ເປັນ ເຫດໃຫ້ປະເທດຝຣັ່ງເດືອດຮ້ອນທີ່ສຸດໃນ 300 ປີຕໍ່ມາ, ແຕ່ເປັນການປາບປາມພວກເຂົາຕ່າງຫາກ ທີ່ ເປັນເຫດໃຫ້ເກີດການນອງເລືອດໃນການປະຕິວັດຝຣັ່ງ. {GC 226.2}

ບັດນີ້ຄວາມລະແວງແຄງໃຈ, ຄວາມບໍ່ໄວ້ເນື້ອເຊື່ອໃຈ ແລະ ຄວາມຢ້ານກົວໄດ້ລາມໄປທົ່ວເຖິງທຸກ ຊົນຊັ້ນຂອງສັງຄົມ. ໃນທ່າມກາງຄວາມຕື່ນຕົກໃຈທີ່ເກີດຂຶ້ນທົ່ວໄປນັ້ນ ໄດ້ປາກົດໃຫ້ເຫັນວ່າພວກຄົນທີ່ ມີການສຶກສາສູງທີ່ສຸດ, ມີອິດທິພົນຫຼາຍທີ່ສຸດ ແລະ ມີອຸປະນິໄສທີ່ງົດງາມທີ່ສຸດຂອງຊາດ ໄດ້ຮັບເອົາ ຄຳສອນຂອງລູເທີຢ່າງເລິກເຊິ່ງ. ຕຳແໜ່ງຮັບຜິດຊອບທີ່ມີກຽດຫຼາຍຕຳແໜ່ງໄດ້ຖືກປະຫວ່າງ, ພວກ ນາຍຊ່າງຝີມື, ນັກພິມ, ນັກວິຊາການ, ອາຈານສອນໃນມະຫາວິທະຍາໄລ, ນັກຂຽນ ແລະ ແມ່ນແຕ່ ເຈົ້າໜ້າທີ່ໃນຣາຊວັງກໍໄດ້ສູນຫາຍໄປ. ຫຼາຍຮ້ອຍຄົນອົບພະຍົບປົບໜີຈາກນະຄອນປາຣີ ອັນເປັນ ບ້ານເກີດເມືອງນອນຂອງຕົນ, ເຊິ່ງໃນຈຳນວນຄົນດັ່ງກ່າວ ການທີ່ຫຼົບໜີໄປນັ້ນກໍເປັນສັນຍານທຳອິດ ວ່າ ພວກເຂົາເຫັນດ້ວຍກັບຄຳສອນຂອງຝ່າຍປະຕິຮູບ. ພວກຝ່າຍສັນຕະປາປາຫຼຽວເບິ່ງຮອບຕົວດ້ວຍ ຄວາມປະຫຼາດໃຈ ເມື່ອຮູ້ວ່າເຄີຍມີຄົນນອກຮີດຈຳນວນຫຼາຍລອຍນວນຢູ່ທ່າມກາງພວກເຂົາໂດຍບໍ່ມີ ຜູ້ໃດສົງໄສ. ພວກເຂົາລະບາຍຄວາມໂມໂຫໃສ່ຄົນຍາກຈົນຈຳນວນຫຼວງຫຼາຍ ຜູ້ທີ່ຕົກຢູ່ໃນກຳມືຂອງ ພວກເຂົາ. ໃນຄາວນັ້ນ ຄຸກທັ້ງຫຼາຍກໍແອອັດໄປດ້ວຍຜູ້ຄົນ, ສ່ວນອາກາດນັ້ນກໍມືດມົວດ້ວຍຄວັນໄຟ ຈາກການປະຫານຜູ້ທີ່ຍອມຮັບວ່າຕົນເຊື່ອໃນຂ່າວປະເສີດ. {GC 227.1}

ກະສັດຟຣານຊິສທີ 1 ເຄີຍມີຄວາມພາກພູມໃຈໃນການເປັນຜູ້ນຳທີ່ຟື້ນຟູການສຶກສາໃນວິຊາຄວາມ ຮູ້ ອັນເປັນສັນຍະລັກອັນໜຶ່ງຂອງຕົ້ນສະຕະວັດທີ 16. ເພິ່ນເຄີຍດີໃຈທີ່ສາມາດເຕົ້າໂຮມນັກວິຊາການ ຈາກທຸກປະເທດມາທີ່ຣາຊສຳນັກຂອງຕົນ. ເພິ່ນຮັກການຮຽນຮູ້ ແລະ ດູຖູກຄວາມໂງ່ຈ້າ ແລະ ຄວາມ ງົມງວາຍຂອງພວກບາດຫຼວງ; ສິ່ງເຫຼົ່ານີ້ເປັນເຫດຜົນສ່ວນໜຶ່ງ ທີ່ເພິ່ນຍອມໃຫ້ຝ່າຍປະຕິຮູບເຄື່ອນໄຫວ ກ່ອນໜ້ານີ້. ແຕ່ດ້ວຍຄວາມກະຕືລືລົ້ນທີ່ຢາກກຳຈັດພວກນອກຮີດໃຫ້ໝົດ ຜູ້ອຸປະຖຳການຮຽນຮູ້ຄົນ ນີ້ ໄດ້ອອກຄຳສັ່ງປະກາດງົດການຕີພິມທັງໝົດທົ່ວປະເທດຝຣັ່ງ! ຟຣານຊິສທີ 1 ເປັນຕົວຢ່າງອັນ ໜຶ່ງ ທ່າມກາງຫຼາຍຕົວຢ່າງໃນປະຫວັດສາດ ທີ່ສະແດງໃຫ້ເຫັນວ່າ ການພັດທະນາໃນວິຊາຄວາມ

[23] ໄວລີ, ເຫຼັ້ມ 13, ບົດ 20.

ຮູ້ ບໍ່ໄດ້ເປັນເຄື່ອງປ້ອງກັນຄົນຈາກການມີອະຄະຕິຕໍ່ສາສະໜາ ແລະ ຈາກການບີບບັງຄັບຂົ່ມເຫັງຄົນອື່ນ. {GC 227.2}

ພິທີອັນເປັນຕາຢ້ານ

ມີການເຮັດພິທີເປັນທາງການເພື່ອຢືນຢັນວ່າ ປະເທດຝຣັ່ງທັງຊາດຈະມຸ່ງໝັ້ນໃນການທຳລາຍພວກໂປຣແຕັສຕັງຈົນໝົດກ້ຽງ. ພວກບາດຫຼວງກ່າວວ່າ ການທີ່ພວກໂປຣແຕັສຕັງໄດ້ດູຖູກພິທີສິນລະນິກຂອງກາໂຕລິກນັ້ນ ເປັນການດູຖູກສະຫວັນເບື້ອງເທິງ ແລະ ຈະຕ້ອງມີການຊົດໃຊ້ດ້ວຍເລືອດ; ພວກເຂົາຈຶ່ງຮຽກຮ້ອງໃຫ້ກະສັດເຮັດພິທີໃນນາມຂອງປະຊາຊົນ ເພື່ອຄົນທັງຫຼາຍຈະໄດ້ເຫັນວ່າ ເພິ່ນເຫັນດ້ວຍກັບແຜນການອັນໂຫດຮ້າຍຂອງພວກບາດຫຼວງ. {GC 227.3}

ວັນທີ 21 ເດືອນ ມັງກອນປີ 1535 ຖືກກຳນົດໄວ້ເພື່ອຈັດພິທີອັນເປັນຕາຢ້ານນັ້ນ. ເຫດການທີ່ເກີດຂຶ້ນ ໄດ້ປຸກຄົນທັງຊາດໃຫ້ມີຄວາມຢ້ານກົວທີ່ມາຈາກຄວາມງົມງວາຍ ແລະ ຄວາມກຽດຊັງທີ່ເກີດຈາກຄວາມມືອະຄະຕິ. ຝູງຊົນຈາກຊົນນະບົດຮອບເມືອງທັງໝົດພາກັນຫຼັ່ງໄຫຼເຂົ້າມາໃນນະຄອນປາຣີ ຈົນຖະໜົນຫົນທາງໃນເມືອງເຕັມໄປດ້ວຍຜູ້ຄົນ. ວັນນັ້ນເລີ່ມຕົ້ນຂຶ້ນດ້ວຍການຈັດຂະບວນແຫ່ໃຫຍ່ຢ່າງສະຫງ່າຜ່າເຜີຍ. “ເຮືອນທີ່ຢູ່ຕາມທາງໄດ້ຫ້ອຍຜ້າທີ່ເປັນສັນຍະລັກຂອງການໄວ້ທຸກ ແລະ ມີການຈັດແທ່ນບູຊາໄວ້ເປັນຈຸດໆ.” ໜ້າປະຕູເຮືອນທຸກຫຼັງມີການຈູດກະບອງໄຟ ເພື່ອເປັນການໃຫ້ກຽດແກ່ “ພິທີສິນລະນິກອັນສັກສິດ.” ກ່ອນທີ່ແສງອາລຸນຈະເບີກຟ້າໃນມື້ນັ້ນ ມີການຮ່ວມຂະບວນກັນຂຶ້ນທີ່ຣາຊວັງຂອງກະສັດ. “ມີປ້າຍ ແລະ ໄມ້ກາງແຂນຈາກແຕ່ລະໂບດນຳໜ້າຂະບວນ ຕາມດ້ວຍປະຊາຊົນຖືກະບອງໄຟຢ່າງເປັນຄູ່ເປັນຄູ່.” ຈາກນັ້ນກໍມີພວກພຣະກາໂຕລິກຈາກຄະນະນັກບວດທັງສີ່ຄະນະ, ຕ່າງຄົນຕ່າງໃສ່ເຄື່ອງພິເສດຕາມຄະນະຂອງຕົນ. ຕໍ່ມາກໍມີການແຫ່ພວກວັດຖຸສັກສິດທີ່ມີຊື່ສຽງຢ່າງຫຼວງຫຼາຍ. ພວກຜູ້ນຳຄຣິສຕະຈັກຂີ່ມ້າຕາມມາ ໂດຍນຸ່ງເສື້ອຍາວສີມ່ວງ ແລະ ສີແດງ, ແຖມຍັງໃສ່ເຄື່ອງປະດັບເພັດພອຍທີ່ສະທ້ອນແສງແວວວາວ. {GC 228.1}

“ຈາກນັ້ນ, ແມ່ນເຈົ້າຄະນະແຫ່ງນະຄອນປາຣີຢ່າງຢູ່ໃຕ້ຄັນຈ້ອງອັນງົດງາມ ແລະ ຖືເຂົ້າຈີ່ປະຈຳພິທີສິນລະນິກ. . . . ມີເຈົ້າຊາຍສີ່ຄົນ[24] ຖືຄັນຈ້ອງດັ່ງກ່າວ. . . . ຫຼັງຈາກເຂົ້າຈີ່ ແມ່ນກະສັດຟຣານຊິສທີ 1 ຍ່າງຢູ່ຕາມຫຼັງ. . . . ເພິ່ນບໍ່ໄດ້ໃສ່ມົງກຸດ ຫຼື ເສື້ອຜ້າພິເສດຂອງກະສັດ.” ແຕ່ກະສັດຂອງປະເທດຝຣັ່ງ “ຢູ່ໃນຖານະຜູ້ສຳນຶກໃນຄວາມບາບ” ເພິ່ນ “ບໍ່ຄຸມຫົວ ແຕ່ກົ້ມໜ້າລົງ ແລະ ຖືທຽນນ້ອຍທີ່ຈູດໄວ້ຢູ່ໃນມື.”[25] ເພິ່ນກົ້ມຫົວລົງຄຳນັບຢູ່ທີ່ແທ່ນບູຊາທຸກອັນດ້ວຍຄວາມນອບນ້ອມຖ່ອມຕົນ ບໍ່ແມ່ນຍ້ອນຄວາມຜິດບາບທີ່ເຮັດໃຫ້ຈິດໃຈຂອງຕົນເປັນມົນທິນ ແລະ ບໍ່ແມ່ນຍ້ອນມືຂອງຕົນທີ່ເປື້ອນດ້ວຍເລືອດຂອງຜູ້ບໍຣິສຸດ, ແຕ່ຍ້ອນເພິ່ນຖືວ່າປະຊາຊົນໄດ້ເຮັດບາບຢ່າງຮ້າຍແຮງ ທີ່ກ້າຕຳໜິພິທີສິນລະນິກຂອງກາໂຕລິກ. ຈາກນັ້ນແມ່ນພຣະຣາຊິນີ ແລະ ບັນດາເຈົ້າໜ້າທີ່ກັບຂຸນນາງທີ່ຍ່າງມາເປັນຄູ່ເປັນຄູ່ ຕ່າງຄົນຕ່າງຖືກະບອງໄຟທີ່ຈູດໄວ້. {GC 228.2}

ສ່ວນໜຶ່ງຂອງພິທີກຳໃນມື້ນັ້ນ ແມ່ນກະສັດເອງໄດ້ກ່າວແກ່ເຈົ້າໜ້າທີ່ຊັ້ນສູງຂອງແຜ່ນດິນໃນຫໍຜາສາດຂອງເຈົ້າຄະນະ. ເພິ່ນຄ່ຳຄວນດ້ວຍໃບໜ້າທີ່ໂສກເສົ້າ ແລະ ຖ້ອຍຄຳທີ່ສຸດຊຶ້ງຕຶງໃຈວ່າ “ມັນຄືອາດຊະຍາກຳແທ້ໃດ! ມັນຄືການໝິ່ນປະໝາດຫັ້ນແລ້ວ! ອັນແຫ່ງຄວາມໂສກເສົ້າ ແລະ ການອັບອາຍຂາຍໜ້າ” ໄດ້ເກີດຂຶ້ນກັບປະເທດຊາດບ້ານເມືອງ. ແລ້ວເພິ່ນກໍຮຽກຮ້ອງປະຊາຊົນທີ່ຈົງຮັກພັກດີທຸກຄົນ ໃຫ້ຊ່ວຍກຳຈັດຄວາມນອກຮີດທີ່ລະບາດໃນຂະນະນັ້ນ ທີ່ເຮັດໃຫ້ປະເທດຝຣັ່ງທັງໝົດສ່ຽງທີ່ຈະ

[24] ສາມຄົນແມ່ນລູກຊາຍຂອງກະສັດ ແລະ ອີກຄົນໜຶ່ງແມ່ນທ່ານດະຍຸກແຫ່ງແວນໂດມ.

[25] ໄວລີ, ເຫຼັ້ມ 13, ບົດ 21.

ຕ້ອງພິນາດ. ເພິ່ນກ່າວວ່າ, “ທ່ານທັງຫຼາຍເອີຍ, ຂ້າພະເຈົ້າເປັນກະສັດຂອງພວກທ່ານຢູ່ແນ່ສັນໃດ ຖ້າ ຂ້າພະເຈົ້າຮູ້ວ່າແຂນຂາຂອງຂ້າພະເຈົ້າເອງຕິດເຊື້ອຄວາມເນົ່າເປື່ອຍທີ່ໜ້າຂີ້ດຽດນີ້, ຂ້າພະເຈົ້າຈະ ຍື່ນໃຫ້ພວກທ່ານຟັນມັນຖິ້ມ. . . . ຊໍ້າບໍ່ໜຳ, ຖ້າຫາກຂ້າພະເຈົ້າເຫັນລູກຄົນໜຶ່ງຂອງຂ້າພະເຈົ້າຕິດ ເຊື້ອຮ້າຍດັ່ງກ່າວ ຂ້າພະເຈົ້າຈະບໍ່ໄວ້ໜ້າມັນ. . . . ຂ້າພະເຈົ້າຈະປະຫານມັນຖວາຍພຣະເຈົ້າດ້ວຍມື ຂອງຂ້າພະເຈົ້າເອງ.” ກະສັດຟຣານຊິສເວົ້າດ້ວຍສຽງສະອື້ນ; ສ່ວນຄົນທັງປວງທີ່ຟັງຢູ່ນັ້ນກໍຮ່ວມ ກັນຮ້ອງໄຫ້ ແລະ ຮ້ອງຂຶ້ນເປັນສຽງດຽວກັນວ່າ: “ພວກເຮົາຈະຢູ່ ຫຼື ຈະຕາຍກໍເພື່ອສາສະໜາ ກາໂຕລິກ!”[26] *{GC 228.3}*

ປະເທດຝຣັ່ງເລືອກເອົາຄວາມມືດ

ຄວາມມືດມົວທີ່ປົກຄຸມຢູ່ເໜືອປະເທດຊາດທີ່ປະຕິເສດຄວາມສະຫວ່າງນັ້ນ ເປັນຕາໜ້າຢ້ານແທ້. ພຣະຄຸນທີ່ນຳມາເຊິ່ງຄວາມລອດພົ້ນໄດ້ປາກົດຂຶ້ນ, ຄົນຈຳນວນຫຼວງຫຼາຍໄດ້ເຫັນເຖິງຣິດອຳນາດ ແລະ ຄວາມບໍຣິສຸດແຫ່ງພຣະຄຸນ ແລະ ໄດ້ເກີດຄວາມປາຖະໜາໃນພຣະຄຸນນັ້ນ; ຄວາມສະຫວ່າງໄດ້ສ່ອງ ເຂົ້າໄປໃນບ້ານນ້ອຍເມືອງໃຫຍ່ຂອງປະເທດຝຣັ່ງ, ແຕ່ປະເທດຝຣັ່ງພັດຫັນໜີໄປ ແລະ ເລືອກເອົາຄວາມ ມືດແທນຄວາມສະຫວ່າງ. ພວກເຂົາປະຕິເສດຂອງປະທານຈາກສະຫວັນເມື່ອມີໂອກາດຈະໄດ້ຮັບ. ເຂົາ ທັງຫຼາຍໄດ້ເອີ້ນຄວາມຊົ່ວຮ້າຍວ່າເປັນຄວາມດີ ແລະ ເອີ້ນຄວາມດີວ່າເປັນຄວາມຊົ່ວຮ້າຍ, ຈົນໃນທີ່ສຸດ ກໍໄດ້ຫຼອກຕົວເອງຈົນສຳເລັດ. ບັດນີ້, ເຖິງແມ່ນວ່າພວກເຂົາອາດເຊື່ອແທ້ວ່າ ຕົນກຳລັງຮັບໃຊ້ພຣະເຈົ້າ ໃນການຂົ່ມເຫັງຄົນຂອງພຣະອົງ, ແຕ່ຄວາມຈິງໃຈນັ້ນບໍ່ໄດ້ລຶບລ້າງຄວາມຜິດ. ພວກເຂົາຈົງໃຈປະຕິເສດ ຄວາມສະຫວ່າງທີ່ສາມາດຊ່ວຍພວກເຂົາໃຫ້ພົ້ນຈາກການຖືກຫຼອກລວງ ແລະ ຈາກມົນທິນບາບແຫ່ງ ຈິດວິນຍານທີ່ເກີດຈາກການຂ້າຄົນ. *{GC 229.1}*

ຄຳສາບານທີ່ຈະກຳຈັດຄຳສອນນອກຮີດໃຫ້ໝົດກ້ຽງນັ້ນ ເກີດຂຶ້ນໃນວິຫານໃຫຍ່ ເຊິ່ງເປັນບ່ອນ ດຽວກັນທີ່ເກືອບ 300 ປີຕໍ່ມາ ປະເທດຊາດທີ່ລືມພຣະເຈົ້າຜູ້ຊົ່ງພຣະຊົນຢູ່ນັ້ນ ໄດ້ສະຖາປະນາເທບທິດາ ແຫ່ງເຫດຜົນຂຶ້ນ.[27] ຕໍ່ມາກໍມີການຈັດຕັ້ງຂະບວນແຫ່ຂຶ້ນອີກ ໂດຍບັນດາຕົວແທນຂອງປະເທດຝຣັ່ງເລີ່ມ ລົງມືເຮັດຕາມທີ່ໄດ້ສາບານໄວ້. “ມີການຈັດເວທີຂຶ້ນເປັນຈຸດເປັນຈຸດໃນໄລຍະບໍ່ຫ່າງ ເພື່ອນຳຄຣິສຕຽນ ນິກາຍໂປຣແຕັສຕັ໋ງບາງຄົນມາເຜົາທັງເປັນ ໂດຍຈະຈູດຟືນທັນທີເມື່ອກະສັດມາເຖິງ ແລະ ຈະຢຸດ ເດີນຂະບວນເພື່ອຊົມການປະຫານຊີວິດດ້ວຍໄຟ.”[28] ລາຍລະອຽດຂອງການຖືກທໍລະມານ ເຊິ່ງຄົນ ເຫຼົ່ານັ້ນທີ່ເປັນພະຍານເພື່ອພຣະຄຣິສຕ້ອງທົນນັ້ນ ກໍໂຫດຮ້າຍເກີນທີ່ຈະບັນລະຍາຍໄດ້; ເຖິງຢ່າງນັ້ນ ກໍຕາມ, ຄົນທີ່ຕົກເປັນເຫຍື່ອກໍບໍ່ໄດ້ຫວັ່ນໄຫວເລີຍ. ມີຄົນໜຶ່ງໃຫ້ຄຳຕອບຫຼັງຈາກຖືກຮຽກຮ້ອງໃຫ້ປະຖິ້ມ ຄວາມເຊື່ອວ່າ: “ຂ້າພະເຈົ້າພຽງແຕ່ເຊື່ອໃນສິ່ງທີ່ພວກຜູ້ເຜີຍພຣະທຳ ແລະ ພວກອັກຄະສາວົກເຄີຍສອນ ເທົ່ານັ້ນ ເຊິ່ງເປັນສິ່ງດຽວທີ່ຜູ້ບໍຣິສຸດທັງໝົດໃນອະດີດເຄີຍເຊື່ອກັນ. ຄວາມເຊື່ອສັດທາ ແລະ ຄວາມ ໝັ້ນໃຈທີ່ຂ້າພະເຈົ້າມີໃນພຣະເຈົ້ານັ້ນ ສາມາດຕ້ານທານອຳນາດທັງໝົດຂອງນະຣົກໄດ້.”[29] *{GC 229.2}*

ຫຼາຍຕໍ່ຫຼາຍເທື່ອທີ່ຂະບວນແຫ່ນັ້ນໄດ້ຢຸດຢູ່ບ່ອນຕ່າງ ໆ ທີ່ຈັດໄວ້ເພື່ອທໍລະມານພວກໂປຣແຕັສ-ຕັ໋ງ. ເມື່ອຂະບວນນັ້ນກັບໄປຮອດຈຸດເລີ່ມຕົ້ນທີ່ພຣະຣາຊວັງ, ຝູງຊົນກໍກະຈັດກະຈາຍໄປ; ສ່ວນ ກະສັດ ແລະ ພວກຜູ້ນຳຄຣິສຕະຈັກ ກໍກັບໄປດ້ວຍຄວາມເພິ່ງພໍໃຈເປັນຢ່າງຍິ່ງກັບເຫດການຕ່າງ ໆ

[26] ໂດບິນເຍ, *ປະຫວັດການປະຕິຮູບສາສະໜາໃນເອີຣົບໃນສະໄໝຂອງຄາວິນ*, ເຫຼັ້ມ 4, ບົດ 12.
[27] ເບິ່ງ ບົດທີ 15.
[28] ໄວລີ, ເຫຼັ້ມ 13, ບົດ 21.
[29] ໂດບິນເຍ, *ປະຫວັດການປະຕິຮູບສາສະໜາໃນເອີຣົບໃນສະໄໝຂອງຄາວິນ*, ເຫຼັ້ມ 4, ບົດ 12.

ທີ່ເກີດຂຶ້ນໃນວັນນັ້ນ, ຕ່າງກໍສະແດງຄວາມຊົມຊື່ນຍິນດີວ່າ ວຽກງານທີ່ເລີ່ມຕົ້ນນັ້ນ ຈະສານຕໍ່ຈົນ ຄຳສອນນອກຮີດຖືກທຳລາຍຢ່າງໝົດສິ້ນ. {GC 230.1}

ສ່ວນຂ່າວປະເສີດແຫ່ງສັນຕິສຸກສັນຕິພາບທີ່ປະເທດຝຣັ່ງໄດ້ປະຕິເສດ ກໍຖືກຖອນຮາກຖອນໂຄນ ຈົນສຳເລັດ ແລະ ຜົນທີ່ຕາມມາກໍຮ້າຍກາດຢ່າງແທ້ຈິງ. ໃນວັນທີ 21 ເດືອນມັງກອນ ປີ 1793, ເຊິ່ງ ນັບແຕ່ມື້ທີ່ປະເທດຝຣັ່ງອຸທິດຕົນຢ່າງເຕັມທີ່ ເພື່ອຂົ່ມເຫັງພວກນັກປະຕິຮູບນັ້ນກໍຄົບຮອບ 258 ປີ ພໍດີ, ມີການເດີນຂະບວນຕາມຖະໜົນຫົນທາງຂອງນະຄອນປາຣີອີກ ແຕ່ຈຸດປະສົງຂອງຂະບວນ ໃໝ່ນີ້ແຕກຕ່າງກັບຂະບວນທຳອິດຢ່າງໃຫຍ່ຫຼວງ. “ນັບເປັນອີກເທື່ອໜຶ່ງທີ່ກະສັດເປັນບຸກຄົນສຳຄັນ ທີ່ສຸດໃນງານ; ໃນເຫດການຄັ້ງທີສອງນັ້ນມີຄວາມວຸ້ນວາຍ ແລະ ການຮ້ອງສຽງດັງເໝືອນໃນຄັ້ງ ທຳອິດ ທີ່ຮຽກຮ້ອງໃຫ້ເພີ່ມຈຳນວນຜູ້ຄົນທີ່ຈະຖືກຈັບໄປປະຫານ; ມີການຈັດເວທີສີດຳຂຶ້ນເໝືອນໃນຍຸກ ກ່ອນ. ໃນວັນນັ້ນກໍຈົບລົງດ້ວຍການປະຫານຊີວິດຢ່າງໜ້າສະຫຍົດສະຫຍອງຄືເກົ່າ; ກະສັດ ຫຼຸຍສ໌ ທີ 16 ສູ້ຮົບຕົບມືກັບນາຍຄຸກ ແລະ ເພັດຊະຄາດ ແຕ່ສຸດທ້າຍກໍຖືກລາກໄປຂຶ້ນຂຽງ ແລະ ຖືກ ກົດລົງໄປຈົນຂວານປະຫານສັບລົງມາ ແລະ ຫົວຂອງເພິ່ນກິ້ງຕົກຢູ່ເທິງເວທີ.”[30] ໃນຄາວນັ້ນບໍ່ແມ່ນ ກະສັດຜູ້ດຽວທີ່ຕົກເປັນເຫຍື່ອ, ແຕ່ໃກ້ບ່ອນດຽວກັນນັ້ນມີ 2,800 ຄົນເສຍຊີວິດຍ້ອນມີດປະຫານ ໃນ ສະໄໝທີ່ຄວາມໂຫດຫ້ຽມສະຫຍອງຂວັນຄອງເມືອງ (Reign of Terror) ອັນເປັນຍຸກແຫ່ງການ ນອງເລືອດ. {GC 230.2}

ຂະບວນການປະຕິຮູບສາສະໜາຄັ້ງໃຫຍ່ນັ້ນໄດ້ນຳສະເໜີພຣະຄຳພີທີ່ເປີດອອກໃຫ້ແກ່ຊາວໂລກໄດ້ ເຫັນ ທັງໄດ້ເປີດເຜີຍພຣະບັນຍັດຂອງພຣະເຈົ້າ ແລະ ສອນໃຫ້ປະຊາຊົນຮູ້ວ່າ ພຣະບັນຍັດນັ້ນ ຄອບຄຸມຈິດສຳນຶກຜິດຊອບຂອງມະນຸດ. ຄວາມຮັກອັນບໍ່ມີຂອບເຂດຂອງພຣະເຈົ້າ ໄດ້ເປີດເຜີຍໃຫ້ ມະນຸດເຫັນເຖິງກົດບັນຍັດ ແລະ ຫຼັກການຕ່າງ ໆ ຂອງສະຫວັນ. ພຣະເຈົ້າຊົງກ່າວວ່າ: “ຈົ່ງປະຕິບັດ ຕາມກົດບັນຍັດນັ້ນຢ່າງສັດຊື່ ເພາະການກະທຳເຊັ່ນນັ້ນ ຈະສະແດງໃຫ້ຊົນຊາດອື່ນເຫັນວ່າ ພວກເຈົ້າ ສະຫຼາວສະຫຼາດພຽງໃດ. ເມື່ອເຂົາໄດ້ຍິນເຖິງກົດບັນຍັດເຫຼົ່ານີ້ແລ້ວ ເຂົາກໍຈະເວົ້າວ່າ ‘ຊົນຊາດທີ່ຍິ່ງໃຫຍ່ ນີ້ຊ່າງມີປັນຍາ ແລະ ຄວາມຮອບຮູ້ແທ້ນໍ.’” (ພຣະບັນຍັດສອງ 4:6). ເມື່ອປະເທດຝຣັ່ງປະຕິເສດ ຂອງປະທານຈາກສະຫວັນ, ເປັນການຫວ່ານເມັດພືດ ເຊິ່ງງອກຂຶ້ນສູ່ຄວາມພິນາດ ແລະ ສະພາບທີ່ ໄຮ້ກົດໝາຍ, ແລ້ວກໍເປັນໄປຕາມກົດຂອງເຫດ ແລະ ຜົນທີ່ຫຼີກລ່ຽງບໍ່ໄດ້ ຈົນນຳໄປສູ່ການປະຕິວັດ ຝຣັ່ງ ແລະ ສະໄໝທີ່ຄວາມໂຫດຫ້ຽມສະຫຍອງຂວັນຄອງເມືອງ. {GC 230.3}

ແຟໂຣຜູ້ຫ້າວຫັນ

ຫຼາຍປີກ່ອນທີ່ແຜ່ນປ້າຍຈະເປັນເຫດໃຫ້ເກີດການຂົ່ມເຫັງນັ້ນ ແຟໂຣຜູ້ຫ້າວຫັນຖືກຂັບໄລ່ອອກ ຈາກບ້ານເກີດເມືອງນອນຂອງຕົນ. ເພິ່ນໜີໄປຍັງປະເທດສວິສເຊີແລນ ແລະ ສະໜັບສະໜູນວຽກງານ ຂອງສວິງລີ ຈົນສາມາດຊ່ວຍຫັນກະແສສັງຄົມໃຫ້ເຫັນດີກັບຂະບວນການປະຕິຮູບ. ເພິ່ນໃຊ້ບັ້ນປາຍ ຊີວິດທີ່ນັ້ນ ແຕ່ຍັງມີອິດທິພົນຕໍ່ການປະຕິຮູບໃນປະເທດຝຣັ່ງຢູ່ຢ່າງຕໍ່ເນື່ອງ. ໃນຊ່ວງທຳອິດຂອງການ ໜີໄພນັ້ນ ແຟໂຣໃຊ້ຄວາມພະຍາຍາມເປັນພິເສດ ເພື່ອເຜີຍແຜ່ຂ່າວປະເສີດຢູ່ໃນບ້ານເກີດເມືອງນອນ ຂອງຕົນເອງ, ໂດຍເພິ່ນໃຊ້ເວລາຢ່າງຫຼວງຫຼາຍ ໃນການເທດສະໜາປະກາດໃຫ້ແກ່ບັນດາເພື່ອນຮ່ວມ ຊາດທີ່ຢູ່ໃກ້ຊາຍແດນ ແລະ ເຝົ້າສັງເກດຄວາມຂັດແຍ້ງລະຫວ່າງສອງຝ່າຍຢ່າງບໍ່ຮູ້ອິດຮູ້ເມື່ອຍ ທັງ ໃຫ້ຄຳແນະນຳ ແລະ ຄຳໝູນໃຈ. ຜູ້ໜີໄພຄົນອື່ນ ໆ ພ້ອມດ້ວຍແຟໂຣໄດ້ແປບົດຄວາມງານຂຽນຂອງ

[30] ໄວລີ, ເຫຼັ້ມ 13, ບົດ 21.

ນັກປະຕິຮູບຊາວເຢຍລະມັນມາເປັນພາສາຝຣັ່ງ ແລະ ມີການຕີພິມຢ່າງຫຼວງຫຼາຍພ້ອມກັບພຣະຄຳພີພາສາຝຣັ່ງ. ມີນັກຂາຍປຶ້ມນຳເອົາງານຊຸ່ນເຫຼົ່ານີ້ໄປຂາຍຢ່າງກວ້າງຂວາງທົ່ວປະເທດຝຣັ່ງ. ພວກນັກຂາຍປຶ້ມຮັບຊື້ໃນລາຄາຖືກ ແລະ ກຳໄລທີ່ໄດ້ຮັບຈາກການຂາຍນັ້ນ ຊ່ວຍໃຫ້ພວກເຂົາສາມາດດຳເນີນພາລະກິດຢ່າງຕໍ່ເນື່ອງ. *{GC 231.1}*

ແຟໂຣເລີ່ມເຮັດວຽກຢູ່ປະເທດສວິສເຊີແລນໃນຖານະນາຍຄູທຳມະດາຄົນໜຶ່ງ. ເພິ່ນໄປອາໄສຢູ່ທີ່ໝູ່ບ້ານທີ່ຫ່າງໄກສອກຫຼີກແຫ່ງໜຶ່ງ ແລະ ອຸທິດຕົນໃນການສິດສອນເດັກນ້ອຍ. ນອກຈາກສາຂາວິຊາຄວາມຮູ້ທົ່ວໄປແລ້ວ, ເພິ່ນຍັງໄດ້ແນະນຳຄວາມຈິງຂອງພຣະຄຳພີຢ່າງລະມັດລະວັງ ໂດຍຫວັງວ່າຈະສາມາດເຂົ້າເຖິງບັນດາຜູ້ປົກຄອງໄດ້ຜ່ານພວກເດັກນ້ອຍເຫຼົ່ານັ້ນ. ມີບາງຄົນຮັບເຊື່ອ ແຕ່ພວກບາດຫຼວງພັດອອກມາຫ້າມວຽກງານດັ່ງກ່າວ ແລະ ຊາວຊົນນະບົດທີ່ງົມງວາຍ ຖືກປຸກປັ່ນໃຫ້ຕໍ່ຕ້ານການສອນຂອງແຟໂຣ. ບາດຫຼວງຍຸຍົງວ່າ, “ນັ້ນບໍ່ແມ່ນຂ່າວປະເສີດຂອງພຣະຄຣິສດອກ, ເພາະວ່າການປະກາດນັ້ນ ບໍ່ໄດ້ນຳມາເຊິ່ງຄວາມສະຫງົບສຸກ ແຕ່ເປັນເຫດໃຫ້ເກີດສົງຄາມຕ່າງຫາກ.”[31] ຢ່າງໃດກໍຕາມ, ແຟໂຣກໍເຮັດຄືກັບພວກສາວົກລຸ້ນທຳອິດ; ດ້ວຍວ່າ, ເມື່ອເພິ່ນຖືກຂົ່ມເຫັງຢູ່ໃນເມືອງໜຶ່ງ ເພິ່ນກໍໜີໄປອີກເມືອງໜຶ່ງ. ເພິ່ນຍ່າງຈາກໝູ່ບ້ານໜຶ່ງໄປສູ່ອີກໝູ່ບ້ານໜຶ່ງ ແລະ ຈາກເມືອງໜຶ່ງໄປສູ່ອີກເມືອງໃໝ່ ໂດຍຕ້ອງທົນຕໍ່ຄວາມອຶດຫິວ, ຄວາມໜາວເຢັນ ແລະ ຄວາມອິດເມື່ອຍອ່ອນແຮງ ທັງຕ້ອງສ່ຽງຊີວິດໃນທຸກແຫ່ງຫົນ. ເພິ່ນປະກາດຢູ່ໃນຕະຫຼາດ, ໃນໂບດ ແລະ ບາງຄັ້ງກໍໄດ້ເທດສະໜາຈາກທຳມາດໃນໂບດວິຫານໃຫຍ່. ບາງຄັ້ງເພິ່ນພົບວ່າໃນໂບດບໍ່ມີຄົນຟັງ, ບາງຄັ້ງມີສຽງຮ້ອງເຍາະເຍີ້ຍດັງຂຶ້ນມາຂັດຈັງຫວະການເທດສະໜາ ແລ້ວເພິ່ນກໍຖືກດຶງລົງມາຈາກທຳມາດຢ່າງຮຸນແຮງ. ເພິ່ນຖືກພວກນັກເລັງອັນທະພານຕີເກືອບຕາຍ ບໍ່ແມ່ນແຕ່ເທື່ອດຽວ; ຢ່າງໃດກໍຕາມ, ເພິ່ນຍັງມຸ່ງໝັ້ນບາກບັ່ນໄປຂ້າງໜ້າ. ເຖິງແມ່ນວ່າຈະຖືກປະຕິເສດຢູ່ເລື້ອຍໆ ແຕ່ເພິ່ນໂຕ້ຕອບດ້ວຍຄວາມພາກພຽນທີ່ບໍ່ຮູ້ອິດຮູ້ເມື່ອຍ ຈົນເພິ່ນໄດ້ເຫັນຫຼາຍບ້ານຫຼາຍເມືອງ ເຊິ່ງເຄີຍເປັນທີ່ໝັ້ນຂອງລະບອບສັນຕະປາປາ ກັບເປີດປະຕູຮັບເອົາຂ່າວປະເສີດ. ໝູ່ບ້ານທີ່ເພິ່ນເລີ່ມເຮັດວຽກການປະກາດນັ້ນ ໄດ້ຮັບເຊື່ອໃນຄຳສອນຂອງຂະບວນການປະຕິຮູບ. ເມືອງໂມຣັດ (Morat) ແລະ ເມືອງນິວຊາແຕວ (Neuchatel) ປະກາດຍົກເລີກການຖືປະຕິບັດຕາມພິທີກຳຂອງຄຣິສຕະຈັກໂຣມ ແລະ ໄດ້ເອົາຮູບເຄົາລົບຕ່າງໆ ອອກຈາກໂບດທັງຫຼາຍຂອງພວກເຂົາ. *{GC 231.2}*

ແຟໂຣປາຖະໜາມາດົນນານ ທີ່ຈະປັກຫຸງແຫ່ງນິກາຍໂປຣແຕັສຕັງຢູ່ໃນນະຄອນເຈນີວາ (Geneva). ຖ້າຫາກສາມາດຊະນະເມືອງນີ້ໄດ້ ມັນກໍຈະເປັນສູນກາງການປະຕິຮູບໃນປະເທດຝຣັ່ງ, ໃນສວິສເຊີແລນ ແລະ ໃນອີຕາລີ. ດ້ວຍວັດຖຸປະສົງດັ່ງກ່າວ, ເພິ່ນໄດ້ສືບຕໍ່ເຮັດວຽກຈົນຫຼາຍເມືອງ ແລະ ຫຼາຍບ້ານທີ່ຢູ່ບໍລິເວນແວດລ້ອມນະຄອນເຈນີວາໄດ້ຮັບເຊື່ອ. ຕໍ່ມາເພິ່ນກໍເຂົ້າໄປໃນນະຄອນເຈນີວາພ້ອມດ້ວຍເພື່ອນຮ່ວມງານຄົນໜຶ່ງ, ແຕ່ໄດ້ຮັບອະນຸຍາດໃຫ້ເທດສະໜາພຽງສອງເທື່ອ. ພວກບາດຫຼວງພະຍາຍາມຂໍໃຫ້ອຳນາດການປົກຄອງຕັດສິນລົງໂທດແຟໂຣ ແຕ່ກໍໄຮ້ປະໂຫຍດ, ພວກເຂົາຈຶ່ງເອີ້ນເພິ່ນໃຫ້ໄປລາຍງານຕົວຕໍ່ສະພາຄຣິສຕະຈັກ ໂດຍທີ່ພວກເຂົາເຊື່ອງອາວຸດຢູ່ກ້ອງເສື້ອເພາະໝາຍເອົາຊີວິດຂອງເພິ່ນ. ຂ້າງນອກຫໍປະຊຸມມີຝູງຊົນທີ່ໂກດຮ້າຍຖືທ່ອນໄມ້ ແລະ ດາບ; ຄົນເຫຼົ່ານີ້ເຕົ້າໂຮມກັນເພື່ອຈະຂ້າເພິ່ນໃຫ້ຕາຍ ຖ້າຫາກເພິ່ນໜີອອກຈາກສະພາໄດ້ສຳເລັດ. ເຖິງຢ່າງໃດກໍຕາມ, ພວກເຈົ້າເມືອງ ພ້ອມດ້ວຍກຳລັງຖືອາວຸດ ໄດ້ຊ່ວຍຊີວິດຂອງເພິ່ນໄວ້. ໃນຕອນເຊົ້າຂອງມື້ຖັດມາ ເພິ່ນກັບເພື່ອນຮ່ວມງານຖືກ

[31] ໄວລີ, ເຫຼັ້ມ 14, ບົດ 3.

ນຳພາໃຫ້ຂ້າມທະເລສາບໄປຍັງບ່ອນປອດໄພ. ຄວາມພະຍາຍາມເທື່ອທຳອິດຂອງເພິ່ນ ໃນການປະກາດ ຂ່າວປະເສີດຢູ່ນະຄອນເຈນີວາຈຶ່ງສິ້ນສຸດລົງຢ່າງນີ້ແຫຼະ. {GC 232.1}

ສຳລັບຄວາມພະຍາຍາມຄັ້ງຕໍ່ໄປ ມີການເລືອກສົ່ງຄົນທີ່ມີຖານະຕ່ຳຕ້ອຍກວ່າແຟໂຣ ຄືຊາຍໜຸ່ມ ຄົນໜຶ່ງທີ່ເບິ່ງພາຍນອກທຳມະດາ ໆ ຈົນແມ່ນແຕ່ຄົນທີ່ຖືວ່າເປັນມິດກັບຂະບວນການປະຕິຮູບ ກໍຍັງ ປະຕິບັດຕໍ່ລາວຢ່າງເຢັນຊາ. ມີຄົນຖາມວ່າ ທ້າວໜຸ່ມຜູ້ນີ້ຈະສາມາດເຮັດຫຍັງໄດ້ ໃນເມື່ອແຟໂຣເອງ ຖືກປະຕິເສດ? ຄົນທີ່ບໍ່ກ້າຫານ ແລະ ຂາດປະສົບການຈະທົນຕໍ່ການກົດຂີ່ຂົ່ມເຫັງໄດ້ແນວໃດ? ເພາະ ກະແສຕໍ່ຕ້ານເປັນດັ່ງລົມພະຍຸທີ່ຮ້າຍແຮງ ເຊິ່ງໄດ້ຂັບໄລ່ຄົນທີ່ເຂັ້ມແຂງ ແລະ ກ້າຫານທີ່ສຸດໃຫ້ໜີ ໄປ. ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: “ເຈົ້າຈະພົບຄວາມສຳເລັດ ບໍ່ແມ່ນໂດຍກຳລັງທາງທະຫານ ຫຼື ໂດຍ ກຳລັງຂອງເຈົ້າເອງ ແຕ່ໂດຍພຣະວິນຍານຂອງເຮົາ.” (ເຊກາຣີຢາ 4:6). “ພຣະເຈົ້າ . . . ໄດ້ຊົງເລືອກເອົາ ສິ່ງທີ່ມະນຸດຖືວ່າອ່ອນກຳລັງ ເພື່ອໃຫ້ຄົນທີ່ມີກຳລັງຖືກອັບອາຍ.” “ເພາະສິ່ງທີ່ເບິ່ງຄືວ່າ ເປັນຄວາມໂງ່ ຂອງພຣະເຈົ້າ ກໍຍັງສະຫຼາດກວ່າປັນຍາຂອງມະນຸດ ແລະ ສິ່ງທີ່ເບິ່ງຄືວ່າ ເປັນຄວາມອ່ອນແຮງຂອງ ພຣະເຈົ້າ ກໍຍັງແຂງແຮງກວ່າກຳລັງຂອງມະນຸດ.” (1 ໂກຣິນໂທ 1:27, 25). {GC 232.2}

ທ້າວ ໂຟມ໋ງ (Froment) ເລີ່ມຕົ້ນການເຮັດວຽກໃນຖານະນາຍຄູ. ຄວາມຈິງທີ່ເພິ່ນສອນຢູ່ ໂຮງຮຽນ ເດັກນ້ອຍກັບໄປເວົ້າຢູ່ເຮືອນ. ໃນບໍ່ດົນພໍ່ແມ່ພາກັນມາຟັງເພິ່ນອະທິບາຍພຣະຄຳພີ ຈົນ ຫ້ອງຮຽນເຕັມໄປດ້ວຍຜູ້ຟັງທີ່ເອົາໃຈໃສ່. ມີການແຈກຢາຍພຣະຄຳພີໃໝ່ ແລະ ບົດຄວາມສັ້ນ ໆ ຢ່າງກວ້າງຂວາງ; ສິ່ງເຫຼົ່ານີ້ສາມາດເຂົ້າເຖິງຫຼາຍຄົນທີ່ບໍ່ກ້າມາຟັງຄຳສອນໃໝ່ໂດຍກົງ. ຕໍ່ມາຄົນນີ້ກໍ ຕ້ອງໜີເໝືອນກັນ; ແຕ່ເມັດພືດແຫ່ງຄວາມຈິງທີ່ເພິ່ນສອນນັ້ນ ກຳລັງງອກຂຶ້ນຢູ່ໃນໃຈຂອງປະຊາຊົນ. ຂະບວນການປະຕິຮູບໄດ້ຖືກປູກຝັງໄວ້ ແລະ ມັນສືບຕໍ່ງອກເງີຍຂະຫຍາຍອອກ. ພວກນັກເທດສະໜາ ກໍກັບໄປເຄື່ອນໄຫວເຮັດວຽກ ຈົນໃນທີ່ສຸດ ການນະມັດສະການຕາມແບບຂອງໂປຣແຕັສຕັງກາຍເປັນທີ່ ຍອມຮັບໃນນະຄອນເຈນີວາ. {GC 232.3}

ຫຼັງຈາກທີ່ປະສົບກັບເຫດການຫຼາຍຢ່າງໃນລະຫວ່າງການເດີນທາງໄປບ່ອນຕ່າງ ໆ ຄາວິນກໍເຂົ້າ ປະຕູເມືອງເຈນີວາ, ແຕ່ກ່ອນທີ່ເພິ່ນຈະມາເຖິງ ນະຄອນດັ່ງກ່າວໄດ້ປະກາດເຂົ້າຂ້າງຂະບວນການ ປະຕິຮູບແລ້ວ. ສ່ວນສາເຫດທີ່ເພິ່ນໄປນັ້ນ ກໍເປັນດັ່ງນີ້: ໃນຄາວນັ້ນເພິ່ນພວມກັບມາຈາກການ ຢ້ຽມຢາມບ້ານເກີດເປັນຄັ້ງສຸດທ້າຍ ມຸ່ງໜ້າໄປເມືອງບາເຊິນ, ແຕ່ປາກົດວ່າກອງທັບຂອງຈັກກະພັດ ຊານສ໌ທີ 5 ປິດທາງຢູ່, ຄາວິນຈຶ່ງຕ້ອງເດີນທາງອ້ອມໂດຍຜ່ານນະຄອນເຈນີວາ. {GC 233.1}

ແຟໂຣເຫັນວ່າ ການທີ່ຄາວິນມາແວ່ຜ່ານນັ້ນເປັນການຊີ້ນຳຂອງພຣະເຈົ້າ. ເຖິງແມ່ນວ່າຊາວນະຄອນ ເຈນີວາໄດ້ຮັບເຊື່ອຕາມຄຳສອນຝ່າຍການປະຕິຮູບ ແຕ່ກໍຍັງມີວຽກງານທີ່ຕ້ອງເຮັດຢ່າງຫຼວງຫຼາຍ, ເພາະ ຄົນເຮົາບໍ່ໄດ້ກັບໃຈມາຫາພຣະເຈົ້າເປັນໝູ່ຄະນະ ແຕ່ຕ້ອງກັບໃຈເປັນລາຍບຸກຄົນຕ່າງຫາກ; ຫົວໃຈຕ້ອງ ໄດ້ຮັບການຟື້ນຟູ ແລະ ຈິດສຳນຶກຜິດຊອບຕ້ອງຖືກປຸກໃຫ້ຕື່ນຂຶ້ນ ໂດຍຣິດອຳນາດຂອງພຣະວິນຍານ ບໍຣິສຸດ ບໍ່ແມ່ນໂດຍຄຳສັ່ງຂອງສະພາບ້ານເມືອງ. ເຖິງແມ່ນວ່າຊາວນະຄອນເຈນີວາໄດ້ປະຖິ້ມການ ປົກຄອງຂອງຄຣິສຕະຈັກໂຣມ, ແຕ່ພວກເຂົາບໍ່ຄ່ອຍພ້ອມທີ່ຈະປະຖິ້ມຄວາມຊົ່ວທີ່ຈະເລີນຂຶ້ນພາຍໃຕ້ ອຳນາດຂອງຄຣິສຕະຈັກດັ່ງກ່າວ. ມັນບໍ່ແມ່ນວຽກງານທີ່ເບົາບາງເລີຍ ທີ່ຈະສະຖາປະນາຫຼັກທຳມະ ອັນບໍຣິສຸດແຫ່ງຂ່າວປະເສີດຢູ່ທີ່ນັ້ນ ແລະ ກຽມຊາວນະຄອນໃຫ້ມີຄວາມເໝາະສົມສຳລັບໜ້າທີ່ ເຊິ່ງ ພວກເຂົາເຫັນວ່າພຣະເຈົ້າຊົງຮຽກເອີ້ນໃຫ້ປະຕິບັດ. {GC 233.2}

ແຟໂຣໝັ້ນໃຈວ່າ ຄາວິນເປັນຄົນທີ່ສາມາດຮ່ວມມືກັບຕົນໃນວຽກງານນີ້ໄດ້. ແຟໂຣຂໍຮ້ອງຄາວິນຜູ້ ເປັນນັກປະກາດທີ່ໜຸ່ມແໜ້ນ ໂດຍໃຫ້ຄຳນຶງເຖິງພຣະນາມຂອງພຣະເຈົ້າວ່າ ໃຫ້ເພິ່ນຢູ່ເຮັດວຽກທີ່ນັ້ນ

ຕໍ່. ຄາວິນຕື່ນຕົກໃຈສະເງີ, ເພິ່ນເປັນຄົນຂີ້ອາຍ ແລະ ຮັກສັນຕິພາບ ຈຶ່ງບໍ່ຢາກຕິດຕໍ່ກັບຊາວ ນະຄອນເຈນີວາທີ່ກ້າເວົ້າກ້າເຮັດ, ເປັນຕົວຂອງຕົວເອງ ແລະ ມີອາລົມຮຸນແຮງ. ຄວາມອ່ອນແອ ດ້ານສຸຂະພາບ ບວກກັບນິໄສທີ່ມັກຮຽນ ເຮັດໃຫ້ເພິ່ນຊອກຫາຊີວິດທີ່ສັນໂດດ. ຄາວິນເຊື່ອວ່າ ເພິ່ນ ສາມາດຊ່ວຍຂະບວນການປະຕິຮູບໄດ້ດີທີ່ສຸດດ້ວຍການຂຽນ, ເພິ່ນຈຶ່ງຕ້ອງການບ່ອນງຽບ ເພື່ອສຶກສາ ຄົ້ນຄວ້າ ໂດຍເພິ່ນຈະສັ່ງສອນ ແລະ ເສີມສ້າງຄຣິສຕະຈັກທັ້ງຫຼາຍຜ່ານສິ່ງຕີພິມ. ແຕ່ຄາວິນຟັງຄຳ ເຕືອນຂອງແຟໂຣເໝືອນເປັນການຮຽກເອີ້ນຈາກສະຫວັນ ຈຶ່ງບໍ່ກ້າປະຕິເສດ. ເພິ່ນຮູ້ສຶກວ່າ, “ພຣະຫັດ ຂອງພຣະເຈົ້າໄດ້ຍື່ນລົງມາຈາກສະຫວັນ ແລ້ວຈັບເພິ່ນແບບດຶ້ນບໍ່ຫຼຸດ ແລະ ວາງເພິ່ນໄວ້ໃນບ່ອນທີ່ເພິ່ນ ພະຍາຍາມໜີຈາກໄປ.”[32] *{GC 233.3}*

ຄະນະສົງເຢຊຸອິດ ແລະ ສານຄະດີນອກຮີດ

ໃນເວລານັ້ນ ການເຜີຍແຜ່ຫຼັກໂປຣແຕັສຕັງປະສົບກັບໄພອັນຕະລາຍຢູ່ທຸກດ້ານ. ສັນຕະປາປາ ປະກາດຄຳສາບແຊ່ງ ໃຫ້ຊາວນະຄອນເຈນີວາຕົກນະຣົກ ແລະ ມີຫຼາຍປະເທດທີ່ເຮືອງອຳນາດຂົ່ມຂູ່ ວ່າຈະທຳລາຍນະຄອນ. ເປັນໄປໄດ້ຢ່າງໃດທີ່ນະຄອນນ້ອຍໆ ແຫ່ງນີ້ ຈະສາມາດຕ້ານທານລະບອບ ສັນຕະປາປາອັນຊົ່ວອຳນາດ ທີ່ເຄີຍບັງຄັບໃຫ້ກະສັດ ແລະ ຈັກກະພັດຍອມຈຳນົນໄດ້? ມັນຈະຢືນຢັດ ຕໍ່ສູ້ກອງທັບຂອງບັນດາຜູ້ມີໄຊຊະນະອັນຍິ່ງໃຫຍ່ຂອງໂລກໄດ້ແນວໃດ? *{GC 234.1}*

ນິກາຍໂປຣແຕັສຕັງຖືກຂົ່ມຂູ່ໂດຍສັດຕູທີ່ຮ້າຍກາດທົ່ວທຸກປະເທດທີ່ມີການນັບຖືສາສະໜາຄຣິສ. ໄຊຊະນະຕ່າງໆ ໃນຊ່ວງທຳອິດຂອງຂະບວນການປະຕິຮູບໄດ້ຜ່ານໄປແລ້ວ; ບັດນີ້, ຄຣິສຕະຈັກໂຣມຈຶ່ງ ຮວບຮວມກຳລັງໃໝ່ ໂດຍຫວັງວ່າຈະສາມາດທຳລາຍຝ່າຍປະຕິຮູບໄດ້ສຳເລັດ. ໃນຊ່ວງນີ້ແຫຼະ ມີການ ກໍ່ຕັ້ງຄະນະສົງເຢຊຸອິດ (Jesuits) ຂຶ້ນ ອັນເປັນຄະນະສົງ ເຊິ່ງປະກອບດ້ວຍນັກຕໍ່ສູ້ທີ່ໂຫດຮ້າຍ ທີ່ສຸດ, ມີອຳນາດທີ່ສຸດ ແລະ ບໍ່ເຫັນແກ່ສິນທຳຫຼາຍທີ່ສຸດຂອງລະບອບສັນຕະປາປາ. ພວກເຂົາຕັດ ຍາດຕັດມິດ ແລະ ປະລະຝ່າຍໂລກ ທັງດັບຄວາມອີ່ຕົນສົງສານອັນເປັນທຳມະຊາດຂອງມະນຸດ ຮວມ ເຖິງອຸດຫູບໍ່ຟັງເຫດຜົນ ແລະ ບໍ່ໃສ່ໃຈຕໍ່ສຽງຈິດສຳນຶກຜິດຊອບໃດໆ; ພວກເຂົາຮັບຮູ້ແຕ່ກົດດຽວ ຄື ກົດແຫ່ງຄະນະສົງຂອງພວກເຂົາ ແລະ ມີຄວາມຜູກພັນແຕ່ສາຍດຽວ ຄືຄະນະສົງນັ້ນເອງ, ທັງບໍ່ຮັບ ໜ້າທີ່ອື່ນ ນອກເໜືອຈາກການຂະຫຍາຍອຳນາດຂອງຄະນະສົງນັ້ນ. ຂ່າວປະເສີດຂອງພຣະຄຣິສໄດ້ ເສີມກຳລັງໃຫ້ຜູ້ທີ່ຮັບເຊື່ອ ສາມາດປະເຊີນກັບອັນຕະລາຍ ແລະ ອົດທົນຕໍ່ຄວາມທຸກທໍລະມານ ໂດຍ ບໍ່ທໍ້ຖອຍຕໍ່ຄວາມໜາວເຢັນ, ຄວາມຫິວໂຫຍ ການເຮັດວຽກໜັກ ແລະ ຄວາມຂັດສົນ ເພື່ອຍົກຊູ ທຸງແຫ່ງຄວາມຈິງໄວ້ສູງ ເຖິງແມ່ນຕ້ອງປະເຊີນໜ້າກັບເຄື່ອງທໍລະມານ, ຄຸກມືດ ແລະ ຫຼັກປະຫານ ກໍຕາມ. ເພື່ອຮັບມືກັບຄວາມອົດທົນຂອງຄຣິສຕຽນເຫຼົ່ານີ້, ຄະນະເຢຊຸອິດປຸກປັ່ນໃຫ້ນັກບວດໃນຄະນະ ມີຄວາມຄັ່ງໄຄ້ຫຼົງໄຫຼ ຈົນສາມາດອົດທົນຕໍ່ໄພອັນຕະລາຍເໝືອນກັນ ແລະ ຕໍ່ຕ້ານຣິດອຳນາດແຫ່ງ ຄວາມຈິງ ດ້ວຍອາວຸດທັງມວນທີ່ໃຊ້ໃນການຫຼອກລວງ. ບໍ່ມີອາດຊະຍາກຳທີ່ຮ້າຍແຮງເກີນໄປສຳລັບ ພວກເຂົາທີ່ຈະລົງມື, ບໍ່ມີການຫຼອກລວງທີ່ຕ່ຳຊ້າເກີນໄປທີ່ຈະເຜີຍແຜ່ ແລະ ບໍ່ມີການປອມຕົວທີ່ຍາກ ເກີນໄປສຳລັບພວກເຂົາ. ນັກບວດຄະນະເຢຊຸອິດໄດ້ປະຕິຍານຕົນວ່າ ຈະຢູ່ຢ່າງຍາກຈົນ ແລະ ຈະ ບໍ່ມັກໃຫຍ່ໃຝ່ສູງຢູ່ຕະຫຼອດຊີວິດ, ແຕ່ໃນຂະນະດຽວກັນ ກໍສຶກສາມຸ່ງໝາຍໃນການສະແຫວງຫາ ຊັບສິນ ແລະ ອຳນາດ ເພື່ອອຸທິດຕົນຕໍ່ການໂຄ່ນລົ້ມນິກາຍໂປຣແຕັສຕັງ ແລະ ການເສີມສ້າງລະບອບ ສັນຕະປາປາໃຫ້ມີອຳນາດສູງສຸດ. *{GC 234.2}*

[32] ໂດບິນເຍ, *ປະຫວັດການປະຕິຮູບສາສະໜາໃນເອີຣົບໃນສະໄໝຂອງຄາວິນ*, ເຫຼັ້ມ 9, ບົດ 17.

ເມື່ອປາກົດຕົວໃນຖານະນັກບວດປະຈຳຄະນະສົງ, ພວກເຂົານຸ່ງເຄື່ອງຂອງນັກບວດ ແລະ ໄປຢ້ຽມຢາມຄົນໃນຄຸກ ແລະ ໂຮງໝໍ, ທັງບົວລະບັດຮັບໃຊ້ຄົນປ່ວຍໂຊ ແລະ ຄົນຍາກຈົນ ໂດຍອ້າງວ່າຕົນໄດ້ລະທາງໂລກແລ້ວ ແລະ ໄດ້ຮັບເອົາພຣະນາມຂອງພຣະເຢຊູຜູ້ກະທຳຄວາມດີໃນບ່ອນຕ່າງ ໆ ທີ່ພຣະອົງສະເດັດໄປນັ້ນ. ແຕ່ຫຼາຍຄັ້ງ ພາຍນອກທີ່ເບິ່ງຄືສະອາດບໍຣິສຸດນັ້ນ ໄດ້ເຊື່ອງຊ່ອນເຈດຕະນາທີ່ຈະເຮັດຜິດກົດໝາຍ ແລະ ຂ້າຄົນ. ຄະນະສົງເຢຊຸອິດຖືຫຼັກການອັນໜຶ່ງໄວ້ເປັນຄະຕິພົດປະຈຳຄະນະຄື: “ການບັນລຸເປົ້າໝາຍລ້ວນແຕ່ສ້າງຄວາມຊອບທຳໃຫ້ແກ່ວິທີການ.” ໂດຍຄະຕິພົດດັ່ງກ່າວ ພວກເຂົາຖືວ່າການຕົວະຍົວະ, ການລັກຂະໂມຍ, ການໃຫ້ການເທັດໃນສານ ແລະ ການລອບສັງຫານ ບໍ່ພຽງແຕ່ເປັນສິ່ງທີ່ໃຫ້ອະໄພກັນໄດ້ເທົ່ານັ້ນ ແຕ່ເປັນສິ່ງທີ່ໜ້າຍ້ອງຍໍ ຖ້າຫາກວ່າມັນຈະຊ່ວຍສົ່ງເສີມຜົນປະໂຫຍດໃຫ້ກັບຄຣິສຕະຈັກໂຣມ. ພວກເຢຊຸອິດປິດບັງທາດແທ້ຂອງຕົນເອງດ້ວຍຫຼາຍວິທີ ຈົນສາມາດເຂົ້າໄປເຮັດວຽກໃນກະຊວງຕ່າງ ໆ ແລະ ຂຶ້ນເປັນທີ່ປຶກສາຂອງກະສັດຫຼາຍອົງ ທັງມີບົດບາດສຳຄັນໃນການອອກນະໂຍບາຍຂອງປະເທດຕ່າງ ໆ. ພວກເຂົາຍອມເປັນຜູ້ຮັບໃຊ້ເພື່ອເປັນສາຍສືບລ້ວງຄວາມລັບຂອງເຈົ້ານາຍ. ນັກບວດເຢຊຸອິດໄດ້ກໍ່ຕັ້ງວິທະຍາໄລຫຼາຍແຫ່ງຂຶ້ນສຳລັບລູກຫຼານເຊື້ອເຈົ້າ ແລະ ພວກຂຸນນາງ; ນອກຈາກນັ້ນ, ກໍໄດ້ສ້າງໂຮງຮຽນສຳລັບປະຊາຊົນທົ່ວໄປ; ລູກຫຼານສະມາຊິກນິກາຍໂປຣແຕັສຕັງ ຈຶ່ງຖືກດຶງດູດໃຫ້ປະຕິບັດຕາມພິທີກຳຂອງລະບອບສັນຕະປາປາ. ມີການຈັດການນະມັດສະການຢ່າງຫຼູຫຼາອະລັງການຕາມແບບຂອງຄຣິສຕະຈັກໂຣມ ເພື່ອໃຫ້ນັກຮຽນນັກສຶກສາມຶນງົງ ແລະ ຫຼົງຕາມ; ສະນັ້ນ, ເສລີພາບທີ່ຄົນລຸ້ນພໍ່ຍອມເຮັດວຽກໜັກ ແລະ ເສຍເລືອດເພື່ອໄດ້ມາ ກໍຖືກຄົນລຸ້ນລູກທຳລະຍົດຫັກຫຼັງ. ຄະນະເຢຊຸອິດໄດ້ແຜ່ລາມໄປທົ່ວເອີຣົບຢ່າງໄວວາ ແລະ ບໍ່ວ່າພວກເຂົາຈະໄປບ່ອນໃດກໍຕາມ, ກໍມີການຟື້ນຟູລະບອບສັນຕະປາປາຂຶ້ນທີ່ນັ້ນ. {GC 235.1}

ເພື່ອ ໃຫ້ ຄະນະສົງ ດັ່ງກ່າວ ມີ ອຳນາດ ຫຼາຍ ຂຶ້ນ, ສັນຕະປາປາ ໄດ້ ອອກ ໃບ ປະກາດ ພິເສດ ເພື່ອ ສະຖາປະນາ ສານ ຄະດີ ນອກ ຮີດ ຂຶ້ນ ໃໝ່. ເຖິງ ແມ່ນ ວ່າ ມັນ ເປັນ ທີ່ ກຽດ ຊັງ ທົ່ວ ໄປ ແມ່ນ ແຕ່ ໃນ ປະ ເທດ ກາ ໂຕ ລິກ, ແຕ່ ສານ ທີ່ ໜ້າ ຢ້ານ ກົວ ນີ້ ຖືກ ຈັດ ຕັ້ງ ຂຶ້ນ ອີກ ໂດຍ ຜູ້ ນຳ ປະ ເທດ ທັ ງ ຫຼາຍ ໃນ ລະ ບອບ ສັນ ຕະ ປາ ປາ; ຄວາມ ໂຫດ ຮ້າຍ ທາ ລຸນ ທີ່ ເກີດ ຂຶ້ນ ໃນ ຄຸ ກ ລັ ບ ຂອງ ມັ ນ ຫຼາຍ ຕໍ່ ຫຼາຍ ຄັ ້ ງ ຮ້ າ ຍ ແຮງ ເກີ ນ ທີ່ ຈະ ເປີ ດ ເຜີ ຍ ໄດ້. ໃນ ຫຼາຍ ປະ ເທດ, ຫົ ວ ກະ ທິ ຂອງ ຊາ ດ ນັ ບ ພັ ນ ນັ ບ ໝື ່ ນ ຄົ ນ ຖືກ ສານ ຄະ ດີ ນ ອກ ຮີ ດ ຕັ ດ ສິ ນ ລົ ງ ໂທດ; ມີ ທັ ງ ຄົ ນ ບໍ ຣິ ສຸ ດ ແລະ ມີ ກຽ ດ ທີ ່ ສຸ ດ, ປັ ນ ຍາ ຊົ ນ ແລະ ຄົ ນ ທີ ່ ສຶ ກ ສາ ຮ ່ ຳ ຮຽ ນ ສູ ງ ທີ ່ ສຸ ດ, ຄົ ນ ຖື ສິ ນ ທຳ ແລະ ສາ ສະ ໜາ ຈານ ທີ ່ ອຸ ທິ ດ ຕົ ນ ເພື ່ ອ ການ ຮັ ບ ໃຊ້, ປະ ຊາ ຊົ ນ ທີ ່ ດຸ ໝັ ່ ນ ແລະ ຮັ ກ ຊາ ດ, ນັ ກ ວິ ຊາ ການ ທີ ່ ສະ ຫຼາ ດ ຫຼັ ກ ແຫຼ ມ, ຊ ່ າ ງ ຝີ ມ ື ລ ້ ວ ນ ມ ື, ຄົ ນ ເຫຼ ົ ່ າ ນ ີ ້ ໄ ດ ້ ຖ ື ກ ຂ ້ າ ຕ າ ຍ ຫຼ ື ຕ ້ ອ ງ ຫຼ ົ ບ ໜ ີ ໄ ປ ຍັ ງ ດິ ນ ແ ດ ນ ອ ື ່ ນ. {GC 235.2}

ເມືອງຂອງຄາວິນກາຍເປັນບ່ອນຫຼົບໄພ

ນັ້ນ ແຫຼ ະ ແມ ່ ນ ວິ ທີ ການ ທີ ່ ຄ ຣິ ສ ຕ ະ ຈັ ກ ໂ ຣ ມ ນ ຳ ມ າ ໃ ຊ ້ ເ ພ ື ່ ອ ດ ັ ບ ແ ສ ງ ແ ຫ ່ ງ ກ ານ ປ ະ ຕ ິ ຮ ູ ບ, ຢ ຶ ດ ເ ອ ົ າ ພ ຣ ະ ຄ ຳ ພ ີ ໄ ປ ຈ າ ກ ຜ ູ ້ ຄ ົ ນ ແ ລ ະ ຟ ື ້ ນ ຟ ູ ຄ ວ າ ມ ໂ ງ ່ ຈ ້ າ ແ ລ ະ ຄ ວ າ ມ ງ ົ ມ ງ ວ ຍ ຂ ອ ງ ສ ະ ໄ ໝ ຍ ຸ ກ ມ ื ດ. ແ ຕ ່ ພ າ ຍ ໃ ຕ ້ ກ ານ ອ ວ ຍ ພ ອ ນ ຂ ອ ງ ພ ຣ ະ ເ ຈ ົ ້ າ ແ ລ ະ ວ ຽ ກ ງ ານ ຂ ອ ງ ຜ ູ ້ ມ ີ ຈ ິ ດ ໃ ຈ ສ ູ ງ ສ ົ ່ ງ ທ ີ ່ ພ ຣ ະ ອ ົ ງ ຊ ົ ງ ນ ຳ ໃ ຫ ້ ເ ຮ ັ ດ ວ ຽ ກ ຕ ່ ຳ ຈ າ ກ ລ ູ ເ ທ ີ ນ ນ ັ ້ ນ, ຫ ຼ ັ ກ ການ ຂ ອ ງ ໂ ປ ຣ ແ ຕ ັ ສ ຕ ັ ງ ບ ໍ ່ ໄ ດ ້ ຖ ື ກ ລ ົ ບ ລ ้ າ ງ. ກ ຳ ລ ັ ງ ຂ ອ ງ ຝ ່ າ ຍ ປ ະ ຕ ິ ຮ ู ບ ນ ั ้ ນ ບ ໍ ່ ໄ ດ ้ ມ າ ຈ າ ກ ຄ ວ າ ມ ໂ ປ ດ ປ ານ ຫ ຼ ื ອ ອ າ ວ ຸ ດ ຂ ອ ງ ພ ວ ກ ເ ຈ ົ ້ າ ແ ຂ ວ ງ. ປ ະ ເ ທ ດ ທ ี ่ ນ ้ ອ ย ท ี ่ ส ุ ด, ต ่ ำ ต ้ อ ย ท ี ่ ส ุ ด ແ ล ะ ม ี อ ำ น า ด ห ้ อ ย ท ี ่ ส ุ ด ได้ กาย เป็น ที่ ฝัง ของ ผู้ เชื่อ สัด ทา ใน หลัก การ โปร แต้ สตัง. ตัว อย่าง คือ: นะ ครอน เจ นิ วา อัน เป็น เมือง เล็ก น้อย อยู่ ท่า มา กลาง สัด ตู ที่ ยิ่ง ใหญ่ ผู้ วาง แผน ทำ ลาย มัน; ประ เทด ซ์ แลน ที่ อยู่ แถม ชาย ทะ เล ทาง เหนือ ที่ ต้อง ต่อ สู้ กับ การ โจม ตี ของ ประ เทด แอ ัด สะ ปาย ผู้ ผะ เด็ด การ ณ เชื่อ เป็น อา นา จัก

ທີ່ຍິ່ງໃຫຍ່ ແລະ ຈະເລີນຮຸ່ງເຮືອງທີ່ສຸດໃນສະໄໝນັ້ນ; ນອກຈາກນັ້ນ, ກໍມີປະເທດສະວີເດັນ ດິນແດນກັນດານເປົ່າປ່ຽວ; ສະຖານທີ່ເຫຼົ່ານີ້ໄດ້ຮັບໄຊຊະນະເພື່ອຂະບວນການປະຕິຮູບ. {GC 235.3}

ຄາວິນເຮັດວຽກຢູ່ນະຄອນເຈນີວາເກືອບ 30 ປີ ໂດຍຊ່ວງທຳອິດແມ່ນເພື່ອສະຖາປະນາຄຣິສຕະຈັກທີ່ຍຶດໝັ້ນຕາມສິນທຳຂອງພຣະຄຳພີ ແລະ ຕໍ່ມາເພື່ອຂະຫຍາຍຂະບວນການປະຕິຮູບທົ່ວເອີຣົບ. ເຖິງແມ່ນວ່າມີການຜິດພາດໃນການນຳ ແລະ ຄວາມຜິດພ້ຽນໃນຄຳສອນບາງປະການ, ແຕ່ເພິ່ນມີບົດບາດໂດດເດັ່ນໃນການເຜີຍແຜ່ຫຼັກຄວາມຈິງທີ່ມີຄວາມສຳຄັນເປັນພິເສດໃນຍຸກສະໄໝຂອງເພິ່ນ, ທັງມີບົດບາດສຳຄັນໃນການປ້ອງກັນຫຼັກຄຳສອນໂປຣແຕັສຕັງໄວ້ຈາກຄຳສອນຂອງລະບອບສັນຕະປາປາທີ່ທະລັກເຂົ້າມາຢ່າງຖ້ວມທົ້ນ ແລະ ໃນການສົ່ງເສີມຄວາມລຽບງ່າຍ ແລະ ຄວາມບໍຣິສຸດຂອງຊີວິດໃນຄຣິສຕະຈັກຝ່າຍການປະຕິຮູບ ແທນຄວາມທະນົງຕົວ ແລະ ການສໍ້ໂກງທີ່ຄຳສອນຂອງຄຣິສຕະຈັກໂຣມສະໜັບສະໜູນ. {GC 236.1}

ມີການຈັດສົ່ງຂອງຕີພິມ ແລະ ຜູ້ສອນສາສະໜາອອກຈາກນະຄອນເຈນີວາ ໄປເພື່ອເຜີຍແຜ່ຄຳສອນຝ່າຍການປະຕິຮູບ. ຈົນຜູ້ທີ່ຖືກຂົ່ມເຫັງໃນດິນແດນຕ່າງ ໆ ໄດ້ຫັນໄປຂອກຫາການສັ່ງສອນ, ຄຳແນະນຳ ແລະ ກຳລັງໃຈຈາກນະຄອນນີ້. ເມືອງຂອງຄາວິນໄດ້ກາຍເປັນບ່ອນຫຼົບໄພສຳລັບພວກນັກປະຕິຮູບ ທີ່ຖືກໄລ່ລ່າໃນເອີຣົບຕາເວັນຕົກທັງໝົດ. ພວກທີ່ຫຼົບໜີພະຍຸຮ້າຍແຮງ ເຊິ່ງພັດຖະຖົ່ມຢູ່ຕໍ່ເນື່ອງຫຼາຍສະຕະວັດ ໄດ້ມາເຖິງປະຕູນະຄອນເຈນີວາ. ຜູ້ອົບພະຍົບເຫຼົ່ານີ້ຢູ່ໃນສະພາບທີ່ອຶດຫິວ, ບາດເຈັບ, ທັງໄດ້ສູນເສຍບ້ານເຮືອນ ແລະ ຢູ່ຢ່າງໂຮ້ຍາດຂາດມິດ, ແຕ່ຊາວເມືອງຕ້ອນຮັບພວກເຂົາຢ່າງອົບອຸ່ນ ແລະ ດູແລຢ່າງອ່ອນໂຍນ. ຄົນເຫຼົ່ານີ້ໄດ້ພົບບ່ອນຢູ່ອາໄສຢູ່ທີ່ນັ້ນ ແລະ ກາຍເປັນພຣະພອນໃຫ້ແກ່ນະຄອນທີ່ຕ້ອນຮັບພວກຕົນ ໂດຍທາງທັກສະຝີມື, ຄວາມຮູ້ ແລະ ການມີສິນທຳ. ຫຼາຍຄົນທີ່ມາລີ້ໄພທີ່ນັ້ນ ກໍກັບໄປຍັງປະເທດຂອງຕົນ ເພື່ອຕ້ານທານຄວາມໂຫດຮ້າຍຂອງຄຣິສຕະຈັກໂຣມ, ຕົວຢ່າງເຊັ່ນ: ຈອນ ນັອຄ໌ (John Knox) ນັກປະຕິຮູບຜູ້ກ້າຫານຊາວສະກັອດ, ຄະນະປູຣິຕັນ (Puritan) ຊາວອັງກິດຫຼາຍຄົນ, ຊາວໂປຣແຕັສຕັງຈາກຮໍແລນ ແລະ ແອັດສະປາຍ (Spain), ແລະຊາວຮູເກໂນ (Huguenots) ຂອງປະເທດຝຣັ່ງ. ຄົນເຫຼົ່ານີ້ໄດ້ນຳກະບອງໄຟແຫ່ງຄວາມຈິງຈາກນະຄອນເຈນີວາ ໄປເພື່ອຈູດປະກາຍຍັງດິນແດນບ້ານເກີດເມືອງນອນຂອງຕົນ. {GC 236.2}

13

ການປະຕິຮູບໃນ ປະເທດເນເທີແລນ ແລະ ສະແກນດິເນເວຍ

ການປະກາດໃນປະເທດເນເທີແລນ

ໃນປະເທດ ເນເທີແລນ ມີການຕັ້ງໜ້າປະທ້ວງຄວາມໂຫດຮ້າຍຂອງລະບອບສັນຕະປາປາ ຕັ້ງແຕ່ເລີ່ມຕົ້ນການໃຊ້ອຳນາດຢ່າງຜະເດັດການ. 700 ປີກ່ອນສະໄໝຂອງລູເທີ ມີເຈົ້າຄະນະສອງຄົນກ່າວຟ້ອງສັນຕະປາປາຢ່າງບໍ່ຢ້ານກົວ, ເພາະສອງຄົນນີ້ໄດ້ເດີນທາງໄປນະຄອນໂຣມໃນຖານະທູດ ແລະ ໄດ້ຮຽນຮູ້ເຖິງທາດແທ້ຂອງ “ສັນຕະສຳນັກ.” ພວກເຂົາກ່າວວ່າ, ພຣະເຈົ້າ “ຊົງກຳນົດໃຫ້ຄຣິສຕະຈັກເປັນຣາຊິນີ ກໍຄືຄູ່ສົມຣົດຂອງພຣະອົງ ແລະ ຊົງໃຫ້ມີການລ້ຽງຄອບຄົວຂອງນາງ[1] ຢ່າງອຸດົມສົມບູນຕະຫຼອດນິຣັນ. ພຣະອົງຊົງໃຫ້ຄ່າສິນສອດທີ່ບໍ່ເສື່ອມໂຊມ ທັງຊົງມອບມົງກຸດ ແລະ ໄມ້ຄ້ອນເທົ້ານິຣັນໃຫ້ແກ່ນາງ . . . ເຊິ່ງທ່ານໄດ້ແອບລັກເອົາຜົນປະໂຫຍດເຫຼົ່ານີ້ໄປທັງໝົດ. ທ່ານຕັ້ງຕົວເອງຢູ່ໃນພຣະວິຫານຂອງພຣະເຈົ້າ; ແທນທີ່ຈະເຮັດຄືຜູ້ລ້ຽງແກະ, ທ່ານພັດເຮັດຄືໝາປ່າໃສ່ຝູງແກະ. . . . ທ່ານຢາກໃຫ້ພວກຂ້ານ້ອຍເຊື່ອວ່າ ທ່ານເປັນຫົວໜ້າສູງສຸດຂອງເຈົ້າຄະນະທັງຫຼາຍ ແຕ່ທ່ານພັດປະຕິບັດຕົວຄືກັບຜະເດັດການ. . . . ໃນຂະນະທີ່ທ່ານຄວນຈະເປັນຜູ້ຮັບໃຊ້ຂອງບັນດາຜູ້ຮັບໃຊ້ ດັ່ງທີ່ທ່ານເອີ້ນຕົວເອງນັ້ນ, ທ່ານພັດພະຍາຍາມເປັນເຈົ້າເປັນນາຍເໜືອທຸກຄົນ. . . . ທ່ານເປັນເຫດໃຫ້ພຣະບັນຍັດຂອງພຣະເຈົ້າເປັນທີ່ດູຖູກ. . . . ພຣະວິນຍານບໍຣິສຸດເປັນຜູ້ກໍ່ຕັ້ງຄຣິສຕະຈັກທັງຫຼາຍຈົນສຸດປາຍພື້ນພິພົບໂລກ. . . . ພວກເຮົາເປັນພົນລະເມືອງນະຄອນຂອງພຣະເຈົ້າ, ນະຄອນນັ້ນສູງເຖິງສະຫວັນຊັ້ນຟ້າ ແລະ ຍິ່ງໃຫຍ່ກວ່ານະຄອນທີ່ພວກຜູ້ເຜີຍພຣະທຳບໍຣິສຸດຕັ້ງຊື່ວ່າ “ບາບີໂລນ.” ນະຄອນບາບີໂລນທຳທ່າວ່າມາຈາກພຣະເຈົ້າ, ມັນອ້າງວ່າ ໄດ້ເພີ່ງພາຕົນເອງຈົນຂຶ້ນສະຫວັນ ແລະ ໂອ້ອວດວ່າ ມີສະຕິປັນຍາທີ່ອະມະຕະ. ໃນທີ່ສຸດມັນຍັງອວດໂດຍບໍ່ມີເຫດຜົນວ່າ, ມັນບໍ່ເຄີຍເຮັດຜິດ ແລະ ຈະບໍ່ມີວັນເຮັດຜິດໄດ້ຈັກເທື່ອ.”[2] *{GC 237.1}*

ໃນແຕ່ລະສະຕະວັດຫຼັງຈາກນັ້ນ ກໍມີຄົນເກີດມາເພື່ອສືບຕໍ່ການປະທ້ວງນີ້. ມີຜູ້ສອນໃນຍຸກຕົ້ນໆນັ້ນ ໄດ້ເດີນທາງໄປໃນດິນແດນຕ່າງໆ, ເຖິງແມ່ນວ່າກຸ່ມເຫຼົ່ານີ້ຈະມີຊື່ທີ່ເອີ້ນແຕກຕ່າງກັນ, ແຕ່ທຸກຄົນມີລັກສະນະເໝືອນຜູ້ປະກາດຊາວໂວດົວ ແລະ ໄດ້ເຜີຍແຜ່ຄວາມຮູ້ເລື່ອງຂ່າວປະເສີດໃນທຸກບ່ອນທີ່ພວກເຂົາໄປ ຈົນສາມາດເຈາະເຂົ້າໄປເຖິງປະເທດເນເທີແລນ; ຄຳສອນຂອງພວກເຂົາແຜ່ຂະຫຍາຍຢ່າງໄວວາ. ພຣະຄຳພີຂອງຊາວໂວດົວໄດ້ຖືກແປເປັນບົດກອນໃນພາສາຣໍແລນ. ພວກເຂົາກ່າວວ່າ “ພຣະຄຳພີມີປະໂຫຍດຫຼາຍ; ມັນບໍ່ແມ່ນນິຍາຍ ຫຼື ການເວົ້າຕະຫຼົກ, ມັນບໍ່ແມ່ນເລື່ອງໄຮ້ສາລະ ຫຼື ການຫຼອກລວງ, ແຕ່ເປັນຖ້ອຍຄຳແຫ່ງຄວາມຈິງ. ເຖິງແມ່ນວ່າເປືອກພາຍນອກອາດຈະ

[1] ໝາຍເຖິງຄຣິສຕະຈັກ.

[2] ເຈຣາດ ບຣັນ (Gerard Brandt), *ປະຫວັດການປະຕິຮູບໃນບໍລິເວນເຂດປະເທດທີ່ຣາບຕ່ຳ*, ເຫຼັ້ມ 1, ໜ້າ 6.

ແຂງຄືກະດູກໃນບາງຕອນ, ແຕ່ຂ້າງໃນນັ້ນມີໄຂກະດູກທີ່ຫອມຫວານ, ຄວາມໝາຍຄືຂ້າງໃນພຣະຄຳພີນັ້ນມີສິ່ງທີ່ດີ ແລະ ບໍຣິສຸດທີ່ສາມາດຄົ້ນພົບໄດ້ງ່າຍ.”[3] ນີ້ແມ່ນຄຳຊຽນຂອງຜູ້ສະໜັບສະໜຸນຄວາມເຊື່ອດັ້ງເດີມໃນສະຕະວັດທີ 12. *{GC 238.1}*

ພໍເຖິງຕອນນີ້ ຄຣິສຕະຈັກໂຣມກໍເລີ່ມຕົ້ນການກົດຂີ່ຂົ່ມເຫັງ; ແຕ່ທ່າມກາງກອງໄຟປະຫານ ແລະ ການຖືກທໍລະມານນັ້ນ ຜູ້ເຊື່ອຍັງເພີ່ມຂຶ້ນຢ່າງຕໍ່ເນື່ອງ; ໂດຍພວກເຂົາປະກາດຢືນຢັນວ່າ ສຳລັບເລື່ອງສາສະໜາແລ້ວ ມີແຕ່ພຣະຄຳພີເທົ່ານັ້ນ ທີ່ມີສິດອຳນາດແບບບໍ່ມີຄວາມຜິດພ້ຽນ. ຄົນເຫຼົ່ານີ້ຍັງກ່າວອີກວ່າ: “ບໍ່ຄວນມີການບັງຄັບໃຫ້ຜູ້ໃດເຊື່ອ, ແຕ່ຕ້ອງຊະນະໃຈທຸກຄົນດ້ວຍການປະກາດ.”[4] *{GC 238.2}*

ເມັດພືດແຫ່ງຄຳສອນຂອງລູເທີ ໄດ້ພົບດິນດີໃນປະເທດເນເທີແລນ ແລະ ມີຜູ້ຊາຍທີ່ຫ້າວຫັນຈິງໃຈ ແລະ ສັດຊື່ບາງຄົນລຸກຂຶ້ນມາເພື່ອປະກາດຂ່າວປະເສີດ. ໜຶ່ງໃນຄົນເຫຼົ່ານີ້ຄື ເມັນໂນ ຊີໂມນ (Menno Simons) ທີ່ມາຈາກແຂວງໜຶ່ງຂອງຮໍແລນ. ລາວໄດ້ຮັບການສຶກສາໃຫ້ເປັນໂຣມັນກາໂຕລິກ ແລະ ໄດ້ຮັບການເຈີມຕັ້ງໃນຖານະບາດຫຼວງ, ແຕ່ລາວບໍ່ຮູ້ເລື່ອງພຣະຄຳພີເລີຍ ແລະ ກໍບໍ່ຍອມອ່ານ ເພາະຢ້ານວ່າຈະຖືກຫຼອກໃຫ້ຫຼົງເຊື່ອຄຳສອນນອກຮີດ. ເມື່ອຮູ້ສຶກສົງໄສວ່າ ເຂົ້າຈີ່ໃນພິທີສິນລະນິກ ໄດ້ກາຍເປັນເນື້ອແທ້ຂອງພຣະຄຣິສຕາມຄຳສອນຂອງຄຣິສຕະຈັກໂຣມຫຼືບໍ່, ລາວຖືວ່າຄວາມສົງໄສນັ້ນເປັນການທົດລອງຈາກຊາຕານ; ລາວຈຶ່ງອະທິຖານສາລະພາບຄວາມບາບເພື່ອຫຼຸດພົ້ນຈາກຄວາມຄິດນັ້ນ ແຕ່ກໍບໍ່ໄດ້ຜົນ. ລາວຈຶ່ງຫັນໄປໃຊ້ຊີວິດແບບສຳມະເລເທເມົາ ໂດຍຫວັງວ່າຈະສາມາດດັບສຽງຈິດສຳນຶກຜິດຊອບທີ່ຟ້ອງດັ້ງຢູ່ໃນໃຈ ແຕ່ກໍບໍ່ໄດ້ຜົນເຊັ່ນກັນ. ເມື່ອເວລາຜ່ານໄປໄດ້ໄລຍະໜຶ່ງ ລາວໄດ້ຮັບການດົນໃຈໃຫ້ສຶກສາພຣະຄຳພີໃໝ່ ແລະ ບົດຄວາມງານຊຽນຂອງລູເທີ; ສິ່ງເຫຼົ່ານີ້ເຮັດໃຫ້ລາວຮັບເຊື່ອຕາມຄຳສອນຂອງຝ່າຍປະຕິຮູບ. ຕໍ່ມາບໍ່ດົນລາວໄດ້ເຫັນການຕັດຄໍປະຫານຊີວິດຊາຍຄົນໜຶ່ງ ຍ້ອນລາວໄດ້ຮັບບັບຕິສະມາໃໝ່ໃນຖານະຜູ້ໃຫຍ່. ເຫດການນີ້ເປັນແຮງບັນດານໃຈໃຫ້ລາວສຶກສາພຣະຄຳພີກ່ຽວກັບການຮັບບັບຕິສະມາໃຫ້ເດັກອ່ອນ. ລາວບໍ່ສາມາດພົບຫຼັກຖານໃນພຣະຄຳພີທີ່ສະໜັບສະໜຸນເລື່ອງດັ່ງກ່າວ ແຕ່ເຫັນວ່າພຣະຄຳພີລ້ວນແຕ່ສອນວ່າການກັບໃຈ ແລະ ຄວາມເຊື່ອເປັນເງື່ອນໄຂທີ່ຈຳເປັນຂອງການຮັບບັບຕິສະມາ. *{GC 238.3}*

ເມັນໂນຖອນຕົວອອກຈາກຄຣິສຕະຈັກໂຣມ ແລະ ອຸທິດຊີວິດເພື່ອສອນຄວາມຈິງທີ່ເພິ່ນໄດ້ຮັບ. ໃນເຢຍລະມັນ ແລະ ເນເທີແລນມີກຸ່ມຄົນທີ່ຖືສາສະໜາແບບພ້ຽນ ໆ ກຸ່ມໜຶ່ງ; ພວກເຂົາສອນເລື່ອງທີ່ບໍ່ສົມເຫດສົມຜົນ ແລະ ສ້າງຄວາມແຕກແຍກ. ຄົນກຸ່ມນີ້ເລີ່ມຕົ້ນດ້ວຍການທຳລາຍຄວາມເປັນລະບຽບຮຽບຮ້ອຍ ແລະ ສິນທຳອັນດີງາມ ແລ້ວກໍສືບຕໍ່ຈົນເກີດຄວາມຮຸນແຮງ ແລະ ການກໍ່ກະບົດ. ເມັນໂນເຫັນເຖິງຜົນລັບອັນໜ້າຢ້ານທີ່ຈະຕາມມາຢ່າງຫຼີກລ່ຽງບໍ່ໄດ້ ຈາກການເຄື່ອນໄຫວຂອງຄົນກຸ່ມນີ້; ລາວຈຶ່ງຄັດຄ້ານຄຳສອນທີ່ຜິດພ້ຽນ ແລະ ແຜນອຸບາຍທີ່ສ້າງຄວາມປັ່ນປ່ວນຂອງພວກຄັ່ງໄຄ້ສາສະໜາຢ່າງເຕັມທີ່. ຢ່າງໃດກໍຕາມ, ມີຫຼາຍຄົນທີ່ເຄີຍຫຼົງຕາມພວກຄັ່ງສາສະໜາເຫຼົ່ານັ້ນ, ແຕ່ກັບໃຈປະຖິ້ມຄຳສອນທີ່ອັນຕະລາຍຂອງພວກເຂົາ. ນອກຈາກນັ້ນ, ຍັງມີລູກຫຼານຂອງຄຣິສຕຽນສະໄໝບູຮານຫຼາຍຄົນທີ່ຍັງເຫຼືອຢູ່, ເຊິ່ງເປັນໝາກຜົນຂອງການສອນຂອງພວກຊາວໂວດົວ. ເມັນໂນເຮັດວຽກກັບຄົນເຫຼົ່ານີ້ດ້ວຍຄວາມກະຕືລືລົ້ນ ແລະ ໄດ້ພົບຄວາມສຳເລັດ. *{GC 239.1}*

ເມັນໂນເດີນທາງສັ່ງສອນພ້ອມດ້ວຍລູກເມຍເປັນເວລາ 25 ປີ ໂດຍທີ່ຕ້ອງທົນກັບຄວາມລຳບາກຍາກເຢັນ ແລະ ຄວາມຂັດສົນ ທັງໄດ້ສ່ຽງຊີວິດຢູ່ເລື້ອຍ ໆ. ລາວເດີນທາງທົ່ວປະເທດເນເທີແລນ

[3] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 1, ໜ້າ 14.

[4] ມາຕິນ (Martyn), ເຫຼັ້ມ 2, ໜ້າ 87.

ແລະ ພາກເໜືອຂອງເຢຍລະມັນ; ສ່ວນຫຼາຍລາວປະກາດກັບຄົນຍາກຈົນ ແຕ່ອິດທິພົນຂອງລາວ ໄດ້ຂະຫຍາຍອອກຢ່າງກວ້າງຂວາງ. ເຖິງແມ່ນວ່າເມັນໂນມີການສຶກສາໜ້ອຍ ແຕ່ໂດຍທຳມະຊາດ ແລ້ວ ລາວເປັນຄົນເວົ້າຄ່ອງ, ມີຄວາມສັດຊື່ທີ່ບໍ່ອ່ຽງເອນ, ເປັນຄົນອ່ອນນ້ອມຖ່ອມຕົນ, ມີທ່າທາງ ທີ່ສຸພາບອ່ອນໂຍນ ແລະ ພຽນຮັກສາສິນທຳຢ່າງຈິງໃຈ; ຊີວິດຂອງລາວເປັນແບບຢ່າງເຖິງຫຼັກທຳມະ ທີ່ລາວສອນ, ຄົນທັງຫຼາຍຈຶ່ງໄວ້ເນື້ອເຊື່ອໃຈລາວ. ຜູ້ຕິດຕາມຄຳສອນຂອງລາວຕ່າງກະຈັດກະຈາຍ ໄປ ແລະ ຖືກກົດຂີ່ຂົ່ມເຫັງ. ພວກເຂົາໄດ້ຮັບຄວາມເສຍຫາຍຢ່າງໃຫຍ່ຫຼວງ ຈາກການຖືກນັບຮວມ ກັບພວກຊາວເມືອງມຸນສະເຕີ (Münster) ທີ່ຄັ່ງສາສະໜາ. ຢ່າງໃດກໍຕາມ, ມີຄົນຈຳນວນຫຼວງຫຼາຍ ຮັບເຊື່ອຍ້ອນການປະກາດຂອງລາວ. *{GC 239.2}*

ການກົດຂີ່ຂົ່ມເຫັງ

ບໍ່ມີບ່ອນໃດທີ່ຮັບເອົາຄຳສອນຂອງຝ່າຍປະຕິຮູບໂດຍທົ່ວໄປຫຼາຍກວ່າປະເທດເນເທີແລນ; ໃນ ຂະນະດຽວກັນ, ແທບຈະບໍ່ມີປະເທດໃດທີ່ຂົ່ມເຫັງຜູ້ເຊື່ອສັດທາຮຸນແຮງກວ່າປະເທດເນເທີແລນ. ສ່ວນ ໃນປະເທດເຢຍລະມັນ ຈັກກະພັດຊານສ໌ທີ 5 ໄດ້ອອກຄຳສັ່ງຫ້າມຂະບວນການປະຕິຮູບ; ແລະ ເພິ່ນຄົງຍິນດີປະຫານຊີວິດຜູ້ເຊື່ອສັດທາທຸກຄົນ ແຕ່ບັນດາເຈົ້າແຂວງໄດ້ລຸກຂຶ້ນຂັດຂວາງຄວາມໂຫດ ຮ້າຍຂອງເພິ່ນ. ຢ່າງໃດກໍຕາມ, ປະເທດເນເທີແລນນັ້ນ ເປັນປະເທດທີ່ຈັກກະພັດມີອຳນາດຫຼາຍ ກວ່າ; ສະນັ້ນ, ເພິ່ນຈຶ່ງອອກຄຳສັ່ງຢ່າງຕໍ່ເນື່ອງໃຫ້ຂົ່ມເຫັງຜູ້ເຊື່ອຝ່າຍການປະຕິຮູບ. ການອ່ານ ພຣະຄຳພີ, ການເທດສະໜາຕາມພຣະຄຳພີ ຫຼື ເຂົ້າໄປຟັງຄຳເທດສະໜາດັ່ງກ່າວ ຫຼື ແມ່ນແຕ່ ການເວົ້າກ່ຽວກັບພຣະຄຳພີນັ້ນ ລ້ວນແຕ່ມີໂທດປະຫານຊີວິດດ້ວຍການເຜົາໄຟ. ການອະທິຖານຕໍ່ ພຣະເຈົ້າເປັນການສ່ວນຕົວ, ການຫຼີກລ່ຽງທີ່ຈະກົ້ມຂາບຮູບເຄົາລົບ ຫຼື ການຮ້ອງບົດເພງສັນລະເສີນ ກໍມີໂທດປະຫານເຊັ່ນກັນ. ແມ່ນແຕ່ຄົນທີ່ຍອມຮັບວ່າການກະທຳດັ່ງກ່າວເປັນຄວາມຜິດ ກໍຍັງຖືກ ປະຫານ, ຖ້າເປັນຜູ້ຊາຍກໍໃຫ້ປະຫານດ້ວຍການຕັດຄໍ, ຖ້າເປັນແມ່ຍິງກໍໃຫ້ປະຫານດ້ວຍການຝັງ ທັງເປັນ. ຫຼາຍພັນຄົນເສຍຊີວິດພາຍໃຕ້ການປົກຄອງຂອງຈັກກະພັດຊານສ໌ ແລະ ກະສັດຟີລິບ ທີ 2. *{GC 239.3}*

ມີຄັ້ງໜຶ່ງທີ່ທຸກຄົນໃນຄອບຄົວຖືກນຳມາຕໍ່ໜ້າເຈົ້າໜ້າທີ່ສານຄະດີນອກຮີດ ໂດຍມີຂໍ້ກ່າວຫາ ວ່າ ພວກເຂົາບໍ່ໄປຮ່ວມພິທີສິນລະນຶກ ແຕ່ນະມັດສະການຢູ່ເຮືອນ. ເມື່ອຖືກສອບສວນເຖິງພຶດຕິກຳ ຂອງພວກເຂົາໃນຂະນະທີ່ບໍ່ມີຄົນອື່ນຢູ່ນັ້ນ ລູກຊາຍຫຼ້າໄດ້ຕອບວ່າ: “ພວກເຮົາກໍຄູ້ເຂົ່າລົງອະທິຖານ ຂໍ ໃຫ້ພຣະເຈົ້າຊົງໂຜດສ່ອງສະຫວ່າງເຂົ້າມາໃນຈິດໃຈຂອງພວກເຮົາ ແລະ ອະໄພຄວາມຜິດບາບ, ແລ້ວ ກໍອະທິຖານເພື່ອອົງປະມຸກຂອງຊາດ ໃຫ້ການປົກຄອງຂອງເພິ່ນຈະເລີນຂຶ້ນ ແລະ ໃຫ້ເພິ່ນມີຄວາມ ສຸກໃນຊີວິດ. ພວກເຮົາກໍອະທິຖານເພື່ອເຈົ້າໜ້າທີ່ບ້ານເມືອງ ຂໍໃຫ້ພຣະເຈົ້າຊົງໂຜດປົກປັກຮັກສາ ພວກເຂົາ.”[5] ຜູ້ພິພາກສາບາງຄົນຮູ້ສຶກຊາບຊຶ້ງ; ຢ່າງໃດກໍຕາມ, ພໍ່ກັບລູກຊາຍຄົນໜຶ່ງກໍຖືກຕັດສິນ ປະຫານຊີວິດດ້ວຍການເຜົາໄຟ. *{GC 240.1}*

ແຕ່ຄວາມເຊື່ອຂອງຜູ້ສະຫຼະຊີວິດນັ້ນບໍ່ໄດ້ໜ້ອຍໄປກວ່າຄວາມໂກດແຄ້ນຂອງຜູ້ຂົ່ມເຫັງພວກເຂົາ. ບໍ່ ພຽງແຕ່ຜູ້ຊາຍເທົ່ານັ້ນ, ແຕ່ຜູ້ຍິງທີ່ອ່ອນໂຍນ ແລະ ຍິງສາວທີ່ອ່ອນໄວກໍໄດ້ສະແດງເຖິງຄວາມກ້າຫານ ທີ່ບໍ່ຫວັ່ນໄຫວ. “ຜູ້ເປັນພັນລະຍາຈະຢືນຢູ່ໃກ້ຫຼັກປະຫານຂອງສາມີ ແລະ ຈະກະຊິບຄຳປອບໂຍນ ໃນຂະນະທີ່ລາວທົນໄຟເຜົານັ້ນ ຫຼື ຈະຮ້ອງບົດເພງສັນລະເສີນເພື່ອເປັນກຳລັງໃຈ.” “ຍິງສາວຈະນອນ ຢູ່ໃນຫຼຸມຝັງສົບເພື່ອຖືກຝັງທັງເປັນ ໂດຍມີທ່າທາງເໝືອນກັບວ່າກຳລັງເຂົ້າຫ້ອງນອນ ເພື່ອຫຼັບໃນ

[5] ໄວລີ (Wylie), ເຫຼັ້ມ 18, ບົດ 6.

ກາງຄືນ ຫຼື ບາງຄົນຖືກນຳໄປທີ່ຫຼັກປະຫານ ແລະ ຖືກເຜົາໄຟໃຫ້ຕາຍ ໂດຍທີ່ນຸ່ງເຄື່ອງທີ່ດີທີ່ສຸດ ເໝືອນກຳລັງໄປງານແຕ່ງດອງຂອງຕົນເອງ."[6] {GC 240.2}

ເຊັ່ນດຽວກັບສະໄໝທີ່ພວກບໍ່ນັບຖືພຣະເຈົ້າພະຍາຍາມທຳລາຍຂ່າວປະເສີດ, ເລືອດຂອງຊາວຄຣິສຕຽນກໍເປັນດັ່ງເມັດພືດ.[7] ການຂົ່ມເຫັງຊ່ວຍເພີ່ມຈຳນວນຄົນທີ່ເປັນພະຍານເພື່ອຄວາມຈິງ. ແຕ່ລະປີທີ່ຜ່ານໄປນັ້ນ ກະສັດຮູ້ສຶກເຈັບໃຈ ຈົນຈະເປັນບ້າຍ້ອນປະຊາຊົນຍືນຢັດເດັດດ່ຽວບໍ່ຍອມຈຳນົນ; ເພິ່ນຈຶ່ງຊຸກຍູ້ໃຫ້ມີການຂົ່ມເຫັງອັນໂຫດຮ້າຍຕໍ່ໄປ, ແຕ່ກໍບໍ່ເປັນຜົນ. ໃນທີ່ສຸດທ່ານວິນລຽມແຫ່ງອໍເຣນ (William of Orange) ຜູ້ມີຈິດໃຈອັນສູງສົ່ງ ໄດ້ນຳການປະຕິວັດທີ່ປົດປ່ອຍປະເທດຮໍແລນໃຫ້ມີສິດເສລີພາບໃນການນະມັດສະການພຣະເຈົ້າ. {GC 240.3}

ຕາມສາຍພູພິດມົງ, ໃນເຂດທົ່ງພຽງຂອງປະເທດຝຣັ່ງ ແລະ ຕາມຊາຍຝັ່ງທະເລແຫ່ງປະເທດຮໍແລນ, ມີເລືອດຂອງພວກສາວົກ ເປັນເຄື່ອງໝາຍຂອງການປະກາດຂ່າວປະເສີດທີ່ຂະຫຍາຍອອກໄປ; ແຕ່ໃນບັນດາປະເທດທາງເໜືອ ຂ່າວປະເສີດສາມາດເຂົ້າໄປໄດ້ຢ່າງສະຫງົບ. ນັກສຶກສາທີ່ຮຽນຢູ່ເມືອງວິດເທັນເບີກ ໄດ້ກັບຄືນໄປບ້ານເຮືອນຂອງຕົນ ໃນສະແກນດິເນເວຍ ແລະ ນຳຄຳສອນຝ່າຍການປະຕິຮູບເມືອນຳ. ການພິມເຜີຍແຜ່ບົດຄວາມງາມຊຶ້ນຂອງລູເທີ ຍັງເປັນອີກທາງໜຶ່ງທີ່ກະຈາຍຄວາມສະຫວ່າງ. ປະຊາຊົນໃນປະເທດທາງເໜືອເປັນຄົນລຽບງ່າຍ ແລະ ສູ້ທົນ; ຄົນເຫຼົ່ານີ້ໄດ້ຫັນຈາກຄວາມຊົ່ວ, ພິທີກຳອັນຫຼູຫຼາອະລັງການ ແລະ ຈາກຄວາມງົມງວາຍຂອງຄຣິສຕະຈັກໂຣມ ເພື່ອຮັບເອົາຄວາມບໍຣິສຸດ ແລະ ຄວາມລຽບງ່າຍຂອງສັດຈະທຳຄວາມຈິງໃນພຣະຄຳພີເຊິ່ງອຳນວຍໃຫ້ມີຊີວິດ. {GC 240.4}

ການປະກາດໃນປະເທດເດນມາກ

ທ້າວ ທາວເຊັນ (Tausen) "ຜູ້ປະຕິຮູບປະເທດເດນມາກ," ເປັນລູກຊາຍຊາວກະສິກອນ. ຕັ້ງແຕ່ຍັງເປັນເດັກນ້ອຍກໍປາກົດໃຫ້ເຫັນວ່າ ລາວມີສະຕິປັນຍາອັນຫຼັກແຫຼມ. ລາວໃຝ່ຝັນຢ່າງແຮງກ້າ ຢາກມີໂອກາດສຶກສາຮ່ຳຮຽນ ແຕ່ໂດຍສະຖານະຂອງພໍ່ແມ່ກໍບໍ່ມີໂອກາດ, ລາວຈຶ່ງເຂົ້າໄປຢູ່ສຳນັກນັກບວດແຫ່ງໜຶ່ງ. ຄວາມບໍຣິສຸດຂອງຊີວິດ ພ້ອມກັບຄວາມອຸດສາຫະພາກພຽນ ແລະ ຄວາມສັດຊື່ຂອງລາວ ສາມາດຊະນະໃຈຜູ້ທີ່ຮັບຜິດຊອບລາວ. ເມື່ອທົດສອບແລ້ວ ກໍປາກົດວ່າ ລາວມີຄວາມສາມາດທີ່ໜ້າຈະເປັນປະໂຫຍດໃຫ້ຄຣິສຕະຈັກໂຣມໃນອະນາຄົດ. ມີການຕັດສິນໃຈ ສົ່ງລາວໄປຮຽນຕໍ່ໃນມະຫາວິທະຍາໄລແຫ່ງໃດແຫ່ງໜຶ່ງຂອງເຢຍລະມັນ ຫຼື ເນເທີແລນ ໂດຍອະນຸຍາດໃຫ້ລາວເປັນຜູ້ເລືອກມະຫາວິທະຍາໄລເອງ; ແຕ່ມີເງື່ອນໄຂດຽວ ຈະຕ້ອງບໍ່ໄປຮຽນຢູ່ເມືອງວິດເທັນເບີກ. ພວກພຣະກາໂຕລິກກ່າວວ່າ ນັກວິຊາການຂອງຄຣິສຕະຈັກໂຣມຈະຕ້ອງບໍ່ສ່ຽງອັນຕະລາຍຈາກຢາພິດແຫ່ງຄຳສອນນອກຮີດ. {GC 241.1}

ທາວເຊັນໄປຮຽນຢູ່ເມືອງໂຄໂລນ (Cologne) ເຊິ່ງໃນເວລານັ້ນເປັນໜຶ່ງໃນເມືອງທີ່ສະໜັບສະໜູນຄຣິສຕະຈັກໂຣມຢ່າງເຂັ້ມແຂງ ແລະ ໃນສະໄໝນີ້ກໍເຊັ່ນກັນ. ໃນບໍ່ດົນ, ລາວກໍຮູ້ສຶກເບື່ອໜ່າຍກັບພວກນັກວິຊາການທີ່ເນັ້ນການປະຕິບັດທຳເພື່ອເຂົ້າເຖິງພຣະເຈົ້າ. ໃນຊ່ວງເວລານັ້ນ ລາວໄດ້ຮັບບົດຄວາມງາມຊຶ້ນຂອງລູເທີ ແລະ ໄດ້ອ່ານຂໍ້ຄວາມເຫຼົ່ານັ້ນດ້ວຍຄວາມປະຫຼາດໃຈ ແລະ ຄວາມຍິນດີ; ລາວຈຶ່ງປາຖະໜາຢ່າງຍິ່ງທີ່ຈະມີໂອກາດສຶກສາກັບລູເທີໂດຍກົງ. ແຕ່ຖ້າໄປຮຽນກັບລູເທີ ກໍສ່ຽງທີ່ຈະເຮັດໃຫ້

[6] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 18, ບົດ 6.

[7] ສາມາດສຶກສາເພີ່ມເຕີມໄດ້ຈາກ *ບົດຖະແຫຼງຂອງເທີທູລຽນ* (Tertullian's Apology) ວັກ 50.

ເຈົ້າໜ້າທີ່ສຳນັກນັກບວດຜິດໃຈ ຈົນຕັດທຶນການສຶກສາຂອງລາວ. ໃນບໍ່ຊ້າລາວກໍຕັດສິນໃຈ ແລະ ໄດ້ໄປລົງທະບຽນເປັນນັກສຶກສາຢູ່ເມືອງວິດເທັນເບີກ. {GC 241.2}

ເມື່ອກັບຄືນໄປປະເທດເດນມາກ, ທາວເຊັນກໍກັບໄປຢູ່ສຳນັກນັກບວດຂອງລາວ. ຄາວນັ້ນຍັງບໍ່ມີໃຜສົງໄສວ່າລາວເຊື່ອຕາມຄຳສອນຂອງລູເທີ ແລະ ລາວກໍບໍ່ໄດ້ເປີດເຜີຍຄວາມລັບນັ້ນໃຫ້ໃຜຮູ້ ແຕ່ພະຍາຍາມນຳໝູ່ເພື່ອນໃຫ້ມີຄວາມເຊື່ອທີ່ບໍຣິສຸດ ແລະ ຊີວິດທີ່ປາສະຈາກມົນທິນບາບ ໂດຍບໍ່ຍຸຍົງໃຫ້ພວກເຂົາເກີດອະຄະຕິ. ລາວເປີດພຣະຄຳພີມາອະທິບາຍຄວາມໝາຍທີ່ແທ້ຈິງ, ແລ້ວສຸດທ້າຍກໍປະກາດໃຫ້ພວກເຂົາຟັງວ່າ ພຣະຄຣິສຊົງເປັນຄວາມຊອບທຳຂອງຄົນບາບ ແລະ ຊົງເປັນຄວາມຫວັງດຽວທີ່ຈະໄດ້ຮັບຄວາມລອດພົ້ນ. ຫົວໜ້າສຳນັກນັກບວດໂກດຮ້າຍ ຍ້ອນລາວຫວັງເປັນຢ່າງຍິ່ງວ່າ ທາວເຊັນຈະກາຍເປັນຜູ້ປົກປ້ອງຄຣິສຕະຈັກໂຣມທີ່ເກັ່ງກ້າ. ທາວເຊັນຈຶ່ງຖືກຍ້າຍສຳນັກໄປຢູ່ສຳນັກໃໝ່ ແລະ ຖືກກັກຂັງໃນຫ້ອງ ໂດຍມີຜູ້ເຝົ້າຍາມຢ່າງເຂັ້ມງວດ. {GC 241.3}

ແຕ່ບໍ່ຊ້າມີນັກບວດບາງຄົນປະກາດວ່າ ຕົນໄດ້ຮັບເຊື່ອຕາມຫຼັກໂປຣແຕັສຕັງ ອັນເປັນເຫດໃຫ້ພວກທີ່ຄວບຄຸມທາວເຊັນນັ້ນຕົກໃຈຢ້ານ. ທາວເຊັນໄດ້ສື່ສານກັບນັກບວດຄົນອື່ນຜ່ານກ້ຽງເຫຼັກຂອງຫ້ອງຂັງ ຈົນຄົນເຫຼົ່ານັ້ນໄດ້ຮູ້ຈັກຄວາມຈິງ. ຖ້າຫາກວ່າພວກເຈົ້າໜ້າທີ່ຄຣິສຕະຈັກໂຣມໃນເດນມາກມີຄວາມຊຳນານຕໍ່ແຜນການຂອງຄຣິສຕະຈັກເລື່ອງການຈັດການກັບພວກນອກຣີດແລ້ວ ທາວເຊັນກໍຄົງຖືກປິດປາກໄວ້ຕະຫຼອດການ; ແຕ່ແທນທີ່ພວກເຂົາຈະຂັງລາວໄວ້ໃນຄຸກມືດຈົນຕາຍ ກໍພັດຂັບໄລ່ລາວອອກຈາກສຳນັກນັກບວດແທນ. ເຖິງຄາວນີ້ພວກເຂົາກໍໝົດອຳນາດ, ເພາະຫາກໍມີດຳລັດຈາກກະສັດອອກມາປົກປ້ອງຜູ້ສອນຫຼັກຄວາມເຊື່ອຂອງຝ່າຍການປະຕິຮູບ. ແລ້ວທາວເຊັນກໍເລີ່ມຕົ້ນການປະກາດ; ໂບດຕ່າງ ໆ ໄດ້ເປີດປະຕູຕ້ອນຮັບລາວ ແລະ ປະຊາຊົນກໍພາກັນໄປຟັງ. ໃນຂະນະນັ້ນມີຄົນອື່ນນອກຈາກທາວເຊັນທີ່ປະກາດພຣະຄຳຂອງພຣະເຈົ້າ. ພຣະຄຳພີໃໝ່ສະບັບແປເປັນພາສາເດນມາກ ຖືກນຳໄປເຜີຍແຜ່ຢ່າງກວ້າງຂວາງ. ຄວາມພະຍາຍາມຂອງຝ່າຍສັນຕະປາປາໃນການຢັບຢັ້ງການປະກາດ ໄດ້ກາຍເປັນເຫດທີ່ຊ່ວຍຂະຫຍາຍການປະກາດນັ້ນເອງ; ໃນບໍ່ຊ້າ, ປະເທດເດນມາກຈຶ່ງປະກາດການຍອມຮັບຄຳສອນຂອງຂະບວນການປະຕິຮູບ. {GC 242.1}

ຂ່າວປະເສີດໃນປະເທດສະວີເດັນ

ໃນປະເທດສະວີເດັນພວກຊາວໜຸ່ມທີ່ເຄີຍດື່ມນ້ຳຈາກນ້ຳສ້າງແຫ່ງຄວາມຈິງທີ່ເມືອງວິດເທັນເບີກ ໄດ້ເອົານ້ຳແຫ່ງຊີວິດໄປໃຫ້ຄົນໃນຊາດຂອງຕົນ. ທ່ານກາງຜູ້ນຳການປະຕິຮູບປະເທດສະວີເດັນ ມີພີ່ນ້ອງສອງຄົນຊື່ ໂອລັບ ແລະ ໂລເຣັນທິອັດ ເປຕຣີ (Olaf and Laurentius Petri), ເປັນລູກຊາຍຂອງຊ່າງຕີເຫຼັກຄົນໜຶ່ງໃນເມືອງໂອເຣໂບ (Orebro). ສອງອ້າຍນ້ອງນີ້ເປັນລູກສິດຂອງລູເທີ ແລະ ເມລັງໂທນ, ແລະ ມີຄວາມພາກພຽນທີ່ຈະສອນຄວາມຈິງທີ່ພວກເຂົາໄດ້ຮຽນຮູ້. ໂອລັບເໝືອນລູເທີທີ່ປະກາດຢ່າງກະຕືລືລົ້ນ ແລະ ປຸກປະຊາຊົນໃຫ້ຕື່ນດ້ວຍວາຈາທີ່ຄົມຄາຍ; ສ່ວນໂລເຣັນທິອັດນັ້ນ ເໝືອນເມລັງໂທນ ຄືເປັນນັກຄິດທີ່ຮຽນສູງ ແລະ ມີອາລົມສະຫງົບສຸຂຸມ. ທັງສອງຄົນຢຶດຫຼັກສິນລະທຳ, ມີຄວາມເຂົ້າໃຈດ້ານສາສະໜາສາດຢ່າງດີ ແລະ ມີຄວາມກ້າຫານທີ່ບໍ່ຫວັ່ນໄຫວໃນການປະກາດສັດຈະທຳຄວາມຈິງ. ໃນຂະນະດຽວກັນ, ມີການຕໍ່ຕ້ານຈາກພວກຝ່າຍສັນຕະປາປາຢ່າງບໍ່ຂາດສາຍ; ບາດຫຼວງກາໂຕລິກໄດ້ປຸກລະດົມປະຊາຊົນທີ່ຂາດການສຶກສາ ແລະ ງົມງວາຍ. ໂອລັບ ເປຕຣີ ຖືກພວກກຸ່ມຄົນຫົວຮຸນແຮງບຸກໂຈມຕີເລື້ອຍ ໆ ແລະ ໃນຫຼາຍຄັ້ງເກືອບໜີບໍ່ລອດ. ຢ່າງໃດກໍຕາມ, ນັກປະຕິຮູບເຫຼົ່ານີ້ໄດ້ຮັບຄວາມໂປດປານ ແລະ ການປົກປ້ອງຈາກກະສັດ. {GC 242.2}

ສະໄໝນັ້ນ ຄົນທັງຫຼາຍຢູ່ພາຍໃຕ້ການປົກຄອງຂອງຄຣິສຕະຈັກໂຣມ, ປະຊາຊົນຈຶ່ງຕົກຢູ່ໃນຄວາມທຸກຍາກ ແລະ ຕົກຕ່ຳຍ້ອນຖືກກົດຂີ່ຂົ່ມເຫັງ. ໃນເວລານັ້ນ ພວກເຂົາບໍ່ມີພຣະຄຳພີ ແລະ ການນັບຖືສາສະໜາກາໂຕລິກມີແຕ່ເນັ້ນຮູບແບບ ແລະ ພິທີກຳພາຍນອກ, ບໍ່ມີແສງສະຫວ່າງທີ່ຈະສ່ອງເຂົ້າມາໃນຈິດໃຈ. ເພາະເຫດນີ້, ປະຊາຊົນຈຶ່ງຫັນກັບຄືນໄປຫາຄວາມງົມງວາຍ ແລະ ການປະຕິບັດຂອງບັນພະບຸລຸດທີ່ບໍ່ຮູ້ຈັກພຣະເຈົ້າ. ປະເທດສະວິເດັນຖືກແບ່ງອອກເປັນຝັກເປັນຝ່າຍທີ່ຂັດແຍ້ງກັນ ແລະ ການຂັດແຍ້ງນັ້ນໄດ້ສືບຕໍ່ຢ່າງຕໍ່ເນື່ອງ ຈົນເປັນເຫດເພີ່ມຄວາມທຸກຍາກໃຫ້ກັບທຸກຄົນ. ກະສັດປະເທດສະວິເດັນຕັດສິນໃຈໃຫ້ມີການປະຕິຮູບຝ່າຍການປົກຄອງ ແລະ ຝ່າຍສາສະໜາ; ເພິ່ນຈຶ່ງຕ້ອນຮັບສອງອ້າຍນ້ອງນີ້ໃຫ້ມາຊ່ວຍໃນການຕໍ່ສູ້ກັບຄຣິສຕະຈັກໂຣມ. *{GC 243.1}*

ໂອລັບ ເປຕຣີ ຢືນຢູ່ຕໍ່ໜ້າກະສັດ ແລະ ຄົນຊັ້ນນຳຂອງສະວິເດັນ ແລະ ທຸ້ມເທສຸດຄວາມສາມາດເພື່ອກ່າວປົກປ້ອງຄຳສອນຂອງຝ່າຍປະຕິຮູບ ຈາກການຖືກໂຈມຕີຂອງນັກຕໍ່ສູ້ຝ່າຍຄຣິສຕະຈັກໂຣມ. ລາວກ່າວວ່າ, ຄົນເຮົາຈະຮັບຄຳສອນຂອງບັນດານັກຂຽນຄຣິສຕຽນຍຸກເລີ່ມຕົ້ນໄດ້ກໍຕໍ່ເມື່ອຄຳສອນນັ້ນຖືກຕ້ອງຕາມພຣະຄຳພີ. ຄຳສອນທີ່ຈຳເປັນຕໍ່ຄວາມເຊື່ອກໍຢູ່ໃນພຣະຄຳພີແລ້ວ ແລະ ເປັນພາສາທີ່ຈະແຈ້ງເຂົ້າໃຈງ່າຍ, ດັ່ງນັ້ນທຸກຄົນສາມາດເຂົ້າໃຈໄດ້. ພຣະຄຣິສຊົງກ່າວວ່າ, “ສິ່ງທີ່ເຮົາສັ່ງສອນບໍ່ແມ່ນຂອງເຮົາ ແຕ່ແມ່ນຄຳສັ່ງສອນຈາກພຣະເຈົ້າຜູ້ທີ່ໄດ້ໃຊ້ເຮົາມາ.” (ໂຢຮັນ 7:16). ສ່ວນອາຈານໂປໂລກໍກ່າວວ່າ ຖ້າເພີ່ນປະກາດຂ່າວປະເສີດອື່ນໃດນອກຈາກທີ່ເພີ່ນໄດ້ຮັບແລ້ວນັ້ນ ກໍຂໍໃຫ້ເພີ່ນຖືກສາບແຊ່ງ.[8] ໂອລັບກ່າວວ່າ: “ເປັນໄປໄດ້ແນວໃດ ທີ່ຄົນອື່ນຈະບັງອາດອອກຂໍ້ຫ້າມທາງສາສະໜາຕາມໃຈມັກຂອງຕົນ ແລະ ກ່າວວ່າຂໍ້ບັງຄັບດັ່ງກ່າວຈຳເປັນເພື່ອຈະໄດ້ຮັບຄວາມລອດ?”[9] ລາວອະທິບາຍວ່າ ຄຳສັ່ງຕ່າງໆຂອງຄຣິສຕະຈັກບໍ່ມີອຳນາດ ຖ້າຂັດຕໍ່ພຣະບັນຍັດຂອງພຣະເຈົ້າ; ນອກຈາກນັ້ນ, ລາວຍັງຢຶດໝັ້ນການສຳຄັນຂອງໂປຣແຕັສຕັງທີ່ວ່າ “ພຣະຄຳພີພຽງຢ່າງດຽວເທົ່ານັ້ນ” ເປັນບັນທັດຖານແຫ່ງຄວາມເຊື່ອ ແລະ ການປະພຶດປະຕິບັດ. *{GC 243.2}*

ການຕໍ່ສູ້ນີ້ ເຖິງແມ່ນໄດ້ເກີດໃນບ່ອນທີ່ຂ້ອນຂ້າງລັບຕາ, ແຕ່ກໍຍັງສະແດງໃຫ້ພວກເຮົາເຫັນວ່າ “ຜູ້ຊາຍທີ່ຕໍ່ສູ້ໃນສະໄໝການປະຕິຮູບຄັ້ງໃຫຍ່ນັ້ນມີລັກສະນະຢ່າງໃດ. ຄົນເຫຼົ່ານີ້ບໍ່ໄດ້ຂາດການສຶກສາ, ບໍ່ແມ່ນພວກແບ່ງແຍກ ຫຼື ຄົນມັກໂຕ້ຖຽງເພື່ອໃຫ້ຄົນສົນໃຈ, ແຕ່ກົງກັນຂ້າມ ເປັນຄົນທີ່ໄດ້ສຶກສາພຣະຄຳຂອງພຣະເຈົ້າ ແລະ ຮູ້ຈັກວິທີນຳໃຊ້ອາວຸດທີ່ພົບຢູ່ໃນພຣະຄຳພີເປັນຢ່າງດີ; ໃນເລື່ອງການຮຽນສູງນັ້ນ ພວກເຂົານຳຍຸກ. ຖ້າຫາກພວກເຮົາໃສ່ໃຈສະເພາະກັບສູນກາງການປະຕິຮູບທີ່ຮຸ່ງເຮືອງ ເຊັ່ນ ເມືອງວິດເທັນເບີກ ແລະ ນະຄອນຊູຣິກ, ແລະຈົດຈ່ຳຢູ່ກັບຄົນຊື່ດັງເຊັ່ນ: ລູເທີ, ເມລັງໂທນ, ສວິງລີ ແລະ ເອໂກລຳພາດີອັດ, ກໍຄົງຈະມີຄົນບອກພວກເຮົາວ່າ ນັ້ນແມ່ນແນວໜ້າຂອງຝ່າຍປະຕິຮູບ ຈຶ່ງບໍ່ໜ້າແປກໃຈທີ່ພວກເຂົາມີຄວາມສາມາດ ແລະ ຄວາມຮູ້ເປັນພິເສດ, ແຕ່ກອງໜູນຄົງບໍ່ເກັ່ງເທົ່າແນວໜ້າດອກ. ແຕ່ເມື່ອພວກເຮົາຫັນມາສັງເກດປະເທດສະວິເດັນທີ່ຢູ່ຫ່າງໄກນັ້ນ ແລະ ພິຈາລະນາບຸກຄົນທີ່ມີຖານະຕ່ຳເຊັ່ນ: ໂອລັບ ແລະ ໂລເຣັນທີອັດ ເປຕຣີ ກໍຈະເຫັນວ່າ ຕັ້ງແຕ່ລະດັບອາຈານຕະຫຼອດຈົນເຖິງບັນດາລູກສິດຂອງພວກເຂົາເປັນຄົນແບບໃດ. . . . ພວກເຂົາເປັນນັກວິຊາການ ແລະ ເປັນນັກສາສະໜາສາດ ທີ່ໄດ້ຮຽນຮູ້ເຖິງລະບົບຄວາມຈິງແຫ່ງຂ່າວປະເສີດທັງໝົດ ແລະ ເປັນຜູ້ທີ່ສາມາດຂະນະພວກນັກປັດຊະຍາຂອງມະຫາວິທະຍາໄລຕ່າງໆ ແລະ ພວກເຈົ້າໜ້າທີ່ຂອງຄຣິສຕະຈັກໂຣມຢ່າງງ່າຍດາຍ.”[10] *{GC 243.3}*

[8] ເບິ່ງ ຄາລາເຕຍ 1:8.

[9] ໄວລີ, ເຫຼັ້ມ 10, ບົດ 4.

[10] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 10, ບົດ 4.

ຜົນຂອງການຄັດຄ້ານນັ້ນ ກໍຄືກະສັດຂອງສະວີເດັນໄດ້ຮັບເຊື່ອຄຳສອນຝ່າຍໂປຣແຕັສຕັ໋ງ ແລະ ບໍ່ດົນຫຼັງຈາກນັ້ນ ສະພາແຫ່ງຊາດໄດ້ປະກາດເຂົ້າຂ້າງຄຳສອນດັ່ງກ່າວ. ໂອລັບ ເປຕຣີ ໄດ້ແປພຣະຄຳພີໃໝ່ເປັນພາສາສະວີເດັນ ແລະ ຕາມຄວາມປາຖະໜາຂອງກະສັດ ອ້າຍນ້ອງທັງສອງຂອງຕະກູນເປຕຣີ ໄດ້ລົງມືແປພຣະຄຳພີທັງໝົດ. ດັ່ງນັ້ນ, ປະຊາຊົນຊາວສະວີເດັນຈຶ່ງໄດ້ຮັບພຣະຄຳຂອງພຣະເຈົ້າໃນພາສາພື້ນເມືອງຂອງພວກເຂົາເອງເປັນຄັ້ງທຳອິດ. ສະພາແຫ່ງຊາດລົງມະຕິວ່າ ໃຫ້ສົ່ງສາສະໜາຈານໄປທົ່ວອານາຈັກ ເພື່ອອະທິບາຍພຣະຄຳພີ ແລະ ໃຫ້ມີການສອນເດັກນ້ອຍໃນໂຮງຮຽນໃຫ້ອ່ານພຣະຄຳພີ. *{GC 244.1}*

ຄວາມມືດແຫ່ງຄວາມໂງ່ຈ້າງົມງວາຍໄດ້ຖືກກຳຈັດຢ່າງຕໍ່ເນື່ອງ ໂດຍຄວາມສະຫວ່າງແຫ່ງຂ່າວປະເສີດ. ເມື່ອໄດ້ຮັບການປົດປ່ອຍຈາກການກົດຂີ່ຂົ່ມເຫັງຂອງຄຣິສຕະຈັກໂຣມແລ້ວ ປະເທດສະວີເດັນຈຶ່ງຈະເລີນຮຸ່ງເຮືອງ ເປັນຊາດທີ່ເຂັ້ມແຂງຢ່າງທີ່ບໍ່ເຄີຍເປັນມາກ່ອນ. ປະເທດສະວີເດັນກາຍເປັນທີ່ໝັ້ນແຫ່ງໜຶ່ງທີ່ຢຶດຫຼັກຄຳສອນຂອງໂປຣແຕັສຕັ໋ງ. ໜຶ່ງສະຕະວັດຕໍ່ມາ, ໃນຊ່ວງເວລາທີ່ປະສົບໄພອັນຕະລາຍທີ່ສຸດ, ຊາດນ້ອຍໆ ແລະ ອ່ອນແອແຫ່ງນີ້ເປັນປະເທດດຽວໃນເອີຣົບທີ່ກ້າໃຫ້ການສະໜັບສະໜູນ ແລະ ຊ່ວຍກູ້ຊາດເຢຍລະມັນໃນການຕໍ່ສູ້ອັນຮ້າຍແຮງຂອງ “ສົງຄາມ 30 ປີ.” ໃນຄາວນັ້ນ, ເອີຣົບຕອນເໜືອທັງໝົດເບິ່ງຄືວ່າ ຈະຖືກນຳມາຢູ່ພາຍໃຕ້ການປົກຄອງອັນຊົ່ວຮ້າຍຂອງຄຣິສຕະຈັກໂຣມອີກ. ແຕ່ກອງທັບສະວີເດັນຊ່ວຍປະເທດເຢຍລະມັນຕີກອງກຳລັງຝ່າຍສັນຕະປາປາໃຫ້ຖອຍຣົບ ແລະ ຊ່ວຍພວກໂປຣແຕັສຕັ໋ງໃຫ້ເປັນທີ່ຍອມຮັບ ບໍ່ວ່າຈະເຊື່ອຕາມຄຳສອນຂອງລູເທີ ຫຼື ຕາມຄາວິນກໍຕາມ; ນອກຈາກນັ້ນ, ກໍຍັງຟື້ນຟູເສລີພາບທາງຈິດສຳນຶກ ໃນປະເທດທັ້ງຫຼາຍທີ່ຮັບເອົາຄຳສອນຂອງຝ່າຍປະຕິຮູບ. *{GC 244.2}*



ກ່ອນທີ່ແປວໄຟຈະດັບສູງຂອງພວກເຂົາ ລາຕິເມີໄດ້ກ່າວກັບເພື່ອນທີ່ຖືກປະຫານຊີວິດພ້ອມກັບ
ເພິ່ນວ່າ: “ຈົ່ງມີກຳລັງໃຈເຖີດ, ຂ້າພະເຈົ້າເຊື່ອວ່າ, ໂດຍພຣະຄຸນຂອງພຣະເຈົ້າ, ມື້ນີ້
ພວກເຮົາຈະຈຸດແສງທຽນໃນປະເທດອັງກິດທີ່ຈະບໍ່ມີວັນຖືກດັບມອດໄປໄດ້ເລີຍ.”

ເບິ່ງໜ້າ 196.

From J. A. Wylie, The History of Protestantism *(c. 1878).*

14

ນັກປະຕິຮູບຊາວອັງກິດລຸ້ນຫຼັງ

ພຣະວິນຍານຊົງກະຕຸ້ນ ທ່ານ ທິນເດວ ໃຫ້ແປພຣະຄຳພີ

ໃນຂະນະທີ່ລູເທີກຳລັງໄຂພຣະຄຳພີທີ່ຖືກປິດໄວ້ໃຫ້ແກ່ຊາວເຢຍລະມັນ, ພຣະວິນຍານຂອງພຣະເຈົ້າ ຊົງກະຕຸ້ນ ວິນລຽມ ທິນເດວ (William Tyndale) ໃຫ້ແປພຣະຄຳພີໃຫ້ກັບຊາວອັງກິດ. ພຣະຄຳພີ ຂອງໄວຄລິບຖືກແປມາຈາກສະບັບພາສາລາຕິນ ເຊິ່ງມີຂໍ້ຜິດພາດຫຼາຍຢ່າງ. ນອກຈາກນັ້ນ, ມັນບໍ່ເຄີຍ ໄດ້ຮັບການຕີພິມ ແລະ ລາຄາສຳເນົາສະບັບລອກລາຍມືນັ້ນແພງເກີນໄປ ຈົນມີໜ້ອຍຄົນທີ່ສາມາດຊື້ໄດ້ ນອກຈາກພວກຂຸນນາງ ຫຼື ຄົນຮັ່ງມີ; ຊ້ຳບໍ່ໜຳ, ມັນຖືກຄຣິສຕະຈັກໂຣມຫ້າມຢ່າງເດັດຂາດ; ດ້ວຍ ເຫດຜົນເຫຼົ່ານີ້ ພຣະຄຳພີຂອງໄວຄລິບຈຶ່ງຖືກແຜ່ກະຈາຍໃນວົງແຄບ. ໃນປີ 1516, ໜຶ່ງປີກ່ອນລູເທີ ຕິດປະກາດຄຳປະທ້ວງຂອງເພິ່ນ, ທ່ານ ເອີຣັສມາສ (Erasmus) ໄດ້ຈັດພິມພຣະຄຳພີໃໝ່ເປັນພາສາ ກຣີກ ແລະ ພາສາລາຕິນ. ນັບເປັນຄັ້ງທຳອິດທີ່ພຣະຄຳຂອງພຣະເຈົ້າໄດ້ຖືກພິມອອກເປັນພາສາ ເດີມ. ໃນສະບັບນີ້ມີການແກ້ໄຂຂໍ້ຜິດພາດຫຼາຍຢ່າງຂອງສະບັບກ່ອນໆ ແລະ ເນື້ອຫາຖືກປັບປຸງໃຫ້ ຈະແຈ້ງຂຶ້ນກວ່າເກົ່າ. ພຣະຄຳພີໃໝ່ສະບັບພາສາກຣີກຂອງເອີຣັສມາສ ຊ່ວຍນຳພາຄົນທີ່ມີການສຶກສາ ໃຫ້ຮູ້ຈັກຄວາມຈິງໄດ້ດີຂຶ້ນ ແລະ ເປັນແຮງກະຕຸ້ນໃຫ້ແກ່ພັນທະກິດການປະຕິຮູບ. ແຕ່ປະຊາຊົນທົ່ວໄປ ຍັງບໍ່ສາມາດເຂົ້າເຖິງພຣະຄຳຂອງພຣະເຈົ້າໄດ້. ທິນເດວຈຶ່ງຮັບໜ້າທີ່ສານຕໍ່ວຽກງານຂອງໄວຄລິບໃນການ ໃຫ້ພຣະຄຳພີແກ່ຄົນຮ່ວມຊາດ. *{GC 245.1}*

ທິນເດວເປັນນັກຄົ້ນຄວ້າທີ່ສະແຫວງຫາຄວາມຈິງຢ່າງກະຕືລືລົ້ນ ແລະ ໄດ້ຮັບເຊື່ອຂ່າວປະເສີດ ຜ່ານການອ່ານພຣະຄຳພີພາສາກຣີກຂອງເອີຣັສມາສ. ເພິ່ນປະກາດຄວາມເຊື່ອຂອງຕົນຢ່າງບໍ່ຢ້ານກົວ ແລະ ໄດ້ຢືນຢັນວ່າ ຄຳສອນທຸກຢ່າງຕ້ອງໄດ້ຮັບການກວດສອບຈາກພຣະຄຳພີ. ສຳລັບຂໍ້ອ້າງຂອງຄົນ ທີ່ຢູ່ຝ່າຍສັນຕະປາປາທີ່ວ່າຄຣິສຕະຈັກເປັນຜູ້ໃຫ້ພຣະຄຳພີ ແລະ ມີແຕ່ຄຣິສຕະຈັກເທົ່ານັ້ນທີ່ສາມາດ ອະທິບາຍພຣະຄຳພີນັ້ນໄດ້ ທິນເດວກໍຕອບວ່າ: “ເຈົ້າຮູ້ບໍວ່າ ແມ່ນໃຜສອນນົກອີນຊີໃຫ້ຊອກຫາເຫຍື່ອ ຂອງມັນ? ນັ້ນແຫຼະ, ພຣະເຈົ້າອົງດຽວກັນນັ້ນໄດ້ສອນລູກທີ່ຫິວໂຫຍຂອງພຣະອົງ ໃຫ້ພົບເຫັນພຣະບິດາ ຂອງພວກເຂົາຢູ່ໃນພຣະຄຳຂອງພຣະອົງ. ແທນທີ່ຈະເປັນຜູ້ນຳພຣະຄຳພີມາແບ່ງປັນ ພວກເຈົ້າພັດເຊື່ອງ ມັນໄວ້ຈາກພວກເຮົາ; ແມ່ນພວກເຈົ້າທີ່ເຜົາຄົນທັງຫຼາຍທີ່ສອນພຣະຄຳພີ ແລະ ຖ້າເຮັດໄດ້ ພວກເຈົ້າ ຈະເຜົາພຣະຄຳພີເອງດ້ວຍ.”[1] *{GC 245.2}*

ຄົນທັງຫຼາຍພາກັນສົນໃຈການປະກາດຂອງທິນເດວ ແລະ ມີຫຼາຍຄົນຍອມຮັບຄວາມຈິງ. ແຕ່ພວກ ບາດຫຼວງຕື່ນຕົວຢູ່ ແລະ ທັນທີທີ່ເພິ່ນຍ້າຍໄປປະກາດໃນບ່ອນໃໝ່ ພວກເຂົາກໍໃຊ້ວິທີຂົ່ມຂູ່ ແລະ ການ ບິດເບືອນເພື່ອທຳລາຍຜົນງານຂອງເພິ່ນ; ຫຼາຍຕໍ່ຫຼາຍເທື່ອພວກເຂົາໄດ້ປະສົບຜົນສຳເລັດ. ເພິ່ນ ຈຶ່ງຮ້ອງອອກມາວ່າ “ຈະເຮັດແນວໃດດີ? . . . ໃນຂະນະທີ່ຂ້າພະເຈົ້າຫວ່ານຢູ່ບ່ອນໜຶ່ງ, ສັດຕູກໍໄປ

[1] ໂດບິນເຍ (D’Aubigné), *ປະຫວັດການປະຕິຮູບສາສະໜາໃນສະຕະວັດທີ 16*, ເຫຼັ້ມ 18, ບົດ 4.

ທຳລາຍທົ່ງນາທີ່ຂ້າພະເຈົ້າຫາກຳຈາກໄປ. ຂ້າພະເຈົ້າບໍ່ສາມາດຢູ່ທຸກຫົນທຸກແຫ່ງ. ໂອ້! ຖ້າຄຣິສຕຽນມີພຣະຄຳພີໃນພາສາຂອງພວກເຂົາເອງ ພວກເຂົາກຳຈະສາມາດທົນທານຕໍ່ນັກປັ່ນຫົວເຫຼົ່ານີ້ດ້ວຍຕົນເອງໄດ້. ຖ້າປາສະຈາກພຣະຄຳພີແລ້ວ ເປັນໄປບໍ່ໄດ້ທີ່ຈະສອນສະມາຊິກໃຫ້ຢືດໝັ້ນໃນຄວາມຈິງ."[2] *{GC 246.1}*

ບັດນີ້ທິນເດວມີເປົ້າປະສົງໃໝ່, ເພິ່ນກ່າວວ່າ: "ບົດເພງສັນລະເສີນທີ່ຄົນອິດສະຣາເອນຮ້ອງກັນໃນພຣະວິຫານຂອງພຣະເຢໂຮວາ ແມ່ນໄດ້ຮ້ອງໃນພາສາຂອງຊົນຊາດອິດສະຣາເອນ; ແລ້ວຂ່າວປະເສີດຈະບໍ່ກ່າວອອກມາເປັນພາສາອັງກິດທ່າມກາງພວກເຮົາບໍ? . . . ຈະໃຫ້ຄຣິສຕະຈັກຮັບແສງສະຫວ່າງໃນຍາມທ່ຽງວັນໜ້ອຍກວ່າຕອນຮຸ່ງເຊົ້າບໍ? . . . ຄຣິສຕຽນຕ້ອງອ່ານພຣະຄຳພີໃໝ່ໃນພາສາແມ່ຂອງພວກເຂົາ." ພວກນັກສາສະໜາສາດ ແລະ ພວກອາຈານຂອງຄຣິສຕະຈັກຂັດແຍ້ງກັນເອງ, ມີແຕ່ພຣະຄຳພີເທົ່ານັ້ນທີ່ສາມາດນຳມະນຸດສູ່ຄວາມຈິງໄດ້. "ສະມາຊິກຄົນໜຶ່ງນິຍົມນັກສາສະໜາສາດຜູ້ໜຶ່ງ ໃນຂະນະທີ່ສະມາຊິກຄົນອື່ນນິຍົມອີກຄົນໜຶ່ງ; . . . ງານຂຽນຂອງນັກວິຊາການແຕ່ລະຄົນຂັດແຍ້ງກັນເອງ. ແລ້ວພວກເຮົາຈະຈຳແນກແຈກແຈງຄົນທີ່ເວົ້າຖືກກັບຄົນທີ່ເວົ້າຜິດໄດ້ແນວໃດ? . . . ໄດ້ແນວໃດໜໍ? . . . ແນ່ນອນໂດຍການປຽບທຽບກັບພຣະຄຳຂອງພຣະເຈົ້າ."[3] *{GC 246.2}*

ຫຼັງຈາກນັ້ນບໍ່ດົນ, ມີນັກສາສະໜາສາດກາໂຕລິກທີ່ຮຽນສູງຄົນໜຶ່ງມາໂຕ້ຖຽງກັບທິນເດວວ່າ: "ຖ້າຕ້ອງເລືອກແລ້ວ ໃຫ້ຂາດກົດບັນຍັດຂອງພຣະເຈົ້າ ຍັງດີກວ່າທີ່ຈະຂາດບັນຍັດຂອງສັນຕະປາປາ." ທິນເດວຕອບວ່າ: "ຂ້າພະເຈົ້າຂໍປະຕິເສດສັນຕະປາປາ ແລະ ກົດບັນຍັດທັງໝົດຂອງເພິ່ນ; ຖ້າພຣະເຈົ້າຊົງໄວ້ຊີວິດຂ້າພະເຈົ້າແລ້ວ, ບໍ່ດົນຈາກນີ້ໄປ ຂ້າພະເຈົ້າຈະໃຫ້ເດັກຊາຍໄຖນາຮຽນຮູ້ພຣະຄຳພີຫຼາຍກວ່າເຈົ້າ."[4] *{GC 246.3}*

ຄຳນີ້ເປັນການຕອກຢ້ຳເປົ້າປະສົງຂອງເພິ່ນ ທີ່ຈະແປພຣະຄຳພີໃໝ່ໃຫ້ປະຊາຊົນໃນພາສາຂອງພວກເຂົາເອງ; ເພິ່ນຈຶ່ງລົງມືເຮັດວຽກງານນີ້ທັນທີ. ເມື່ອການກົດຂີ່ຂົ່ມເຫັງເປັນເຫດໃຫ້ເພິ່ນຕ້ອງໜີອອກຈາກບ້ານ, ເພິ່ນກໍໄປຢູ່ນະຄອນລອນດອນ ແລະ ສານຕໍ່ການແປຢູ່ທີ່ນັ້ນໃນໄລຍະໜຶ່ງ ໂດຍບໍ່ມີໃຜລົບກວນ. ຕໍ່ມາ, ຄວາມຮຸນແຮງຂອງພວກຝ່າຍສັນຕະປາປາເປັນເຫດໃຫ້ເພິ່ນຕ້ອງຫຼົບໜີອີກຄັ້ງ. ເບິ່ງຄືວ່າປະເທດອັງກິດທັງໝົດໄດ້ປິດລົງສຳລັບທິນເດວ, ເພິ່ນຈຶ່ງຕັດສິນໃຈໄປລີ້ໄພຢູ່ປະເທດເຢຍລະມັນ, ແລ້ວເພິ່ນກໍເລີ່ມພິມພຣະຄຳພີໃໝ່ເປັນພາສາອັງກິດທີ່ນັ້ນ. ການພິມດັ່ງກ່າວຖືກຂັດຂວາງໃຫ້ຕ້ອງຢຸດໄປເຖິງສອງຄັ້ງ, ແຕ່ເມື່ອຖືກຫ້າມພິມໃນເມືອງໜຶ່ງເພິ່ນກໍຍ້າຍໄປອີກເມືອງໜຶ່ງ. ໃນທີ່ສຸດເພິ່ນກໍໄປຢູ່ເມືອງເວີມ ເຊິ່ງເປັນບ່ອນທີ່ລູເທີໄດ້ປົກປ້ອງຂ່າວປະເສີດຕໍ່ສະພາກ່ອນໜ້ານັ້ນບໍ່ເທົ່າໃດປີ. ຢູ່ເມືອງເວີມມີຄົນສະໜັບສະໜູນການປະຕິຮູບຫຼາຍຄົນ; ທິນເດວກໍຢູ່ທີ່ນັ້ນເພື່ອສືບຕໍ່ວຽກງານໂດຍບໍ່ມີສິ່ງໃດຂັດຂວາງອີກ. ໃນບໍ່ຊ້າ, ມີການພິມພຣະຄຳພີໃໝ່ຈຳນວນ 3,000 ເຫຼັ້ມ ແລະ ໃນປີດຽວກັນກໍມີການຕີພິມອີກຮອບໜຶ່ງ. *{GC 246.4}*

ທິນເດວສືບຕໍ່ເຮັດວຽກດ້ວຍຄວາມພາກພຽນ ແລະ ຄວາມກະຕືລືລົ້ນ. ເຖິງແມ່ນວ່າເຈົ້າໜ້າທີ່ອັງກິດໄດ້ເຝົ້າຍາມທ່າເຮືອດ້ວຍຄວາມລະມັດລະວັງເປັນພິເສດ, ແຕ່ພຣະຄຳຂອງພຣະເຈົ້າໄດ້ຖືກນຳສົ່ງໄປທີ່ນະຄອນລອນດອນດ້ວຍວິທີຕ່າງໆ ແລະ ຈາກທີ່ນັ້ນກໍໄດ້ແຜ່ກະຈາຍໄປທົ່ວປະເທດ. ພວກຝ່າຍສັນຕະປາປາພະຍາຍາມປົກປິດຄວາມຈິງ, ແຕ່ກໍບໍ່ສຳເລັດ. ມີຄັ້ງໜຶ່ງທີ່ເຈົ້າຄະນະແຫ່ງເມືອງ

[2] *ອ້າງອີງຈາກທີ່ດຽວກັນ.*

[3] *ອ້າງອີງຈາກທີ່ດຽວກັນ.*

[4] ແອນເດີສັນ (Anderson), *ປະຫວັດພຣະຄຳພີພາສາອັງກິດ*, ໜ້າ 19.

ເດີຮາມ (Durham) ກວາດຊື້ພຣະຄຳພີທຸກເຫຼັ້ມຈາກຮ້ານໜັງສືເພື່ອທຳລາຍຖິ້ມ ໂດຍທີ່ເຈົ້າຂອງຮ້ານເປັນໝູ່ເພື່ອນຂອງທິນເດວ; ເຈົ້າຄະນະຜູ້ນັ້ນຄິດວ່າວິທີນີ້ຈະຂັດຂວາງການແຈກຈ່າໜ່າຍພຣະຄຳພີ. ແຕ່ກົງກັນຂ້າມ, ເງິນທີ່ໄດ້ນັ້ນ ກໍຖືກນຳໄປຊື້ວັດຖຸດິບສຳລັບສະບັບໃໝ່ທີ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ ເຊິ່ງຖ້າບໍ່ແມ່ນຍ້ອນເງິນຈາກເຈົ້າຄະນະຄົນນັ້ນແລ້ວ ຄົງບໍ່ສາມາດພິມອອກໄດ້. ຕໍ່ມາເມື່ອທິນເດວຖືກຈັບຂັງຄຸກ, ເຈົ້າໜ້າທີ່ບອກວ່າຖ້າເປີດເຜີຍຊື່ທຸກຄົນທີ່ໃຫ້ທຶນພິມພຣະຄຳພີແລ້ວ ກໍຈະປ່ອຍເພິ່ນເປັນອິດສະຫຼະ. ທິນເດວຕອບວ່າ ແມ່ນເຈົ້າຄະນະແຫ່ງເມືອງເດີຮາມທີ່ໃຫ້ທຶນຫຼາຍກວ່າຄົນອື່ນທັງໝົດ, ເພາະການກວາດຊື້ພຣະຄຳພີທີ່ເຫຼືອຢູ່ໃນລາຄາແພງ ຊ່ວຍທິນເດວໃຫ້ມີກຳລັງໃຈສານຕໍ່. *{GC 247.1}*

ທິນເດວຖືກທໍລະຍົດໃຫ້ຕົກຢູ່ໃນກຳມືຂອງສັດຕູ ແລະ ມີຄັ້ງໜຶ່ງທີ່ຖືກຈຳຄຸກເປັນເວລາຫຼາຍເດືອນ. ໃນທີ່ສຸດເພິ່ນຖືກຂ້າຍ້ອນຄວາມເຊື່ອ, ແຕ່ຕະຫຼອດຫຼາຍສະຕະວັດມາຈົນເຖິງສະໄໝຂອງພວກເຮົາ ທະຫານຝ່າຍສັດຈະທຳກໍສາມາດນຳໃຊ້ອາວຸດທີ່ເພິ່ນໄດ້ກຽມໄວ້ໃນການຕໍ່ສູ້ເພື່ອຄວາມຈິງ. *{GC 247.2}*

ຄວາມສຳຄັນຂອງພຣະຄຳພີ

ສ່ວນລາຕິເມີ (Latimer) ກໍເທດສະໜາຢືນຢັນວ່າ ພຣະຄຳພີຄວນໄດ້ຮັບການອ່ານເປັນພາສາຂອງປະຊາຊົນ, ໂດຍກ່າວວ່າ ຜູ້ຂຽນພຣະຄຳພີນັ້ນ, “ຄືພຣະເຈົ້າເອງ;” ສະນັ້ນ, ພຣະຄຳພີຈຶ່ງມີຣິດອຳນາດຂອງພຣະເຈົ້າ ແລະ ຈະດຳລົງຢູ່ຕະຫຼອດນິຣັນເໝືອນພຣະອົງ. “ກະສັດ, ຈັກກະພັດ, ເຈົ້າໜ້າທີ່ ແລະ ຜູ້ປົກຄອງທຸກຄົນ . . . ລ້ວນແລ້ວແຕ່ຕ້ອງເຊື່ອຟັງ . . . ພຣະຄຳອັນສັກສິດຂອງພຣະເຈົ້າ.” “ຢ່າໃຫ້ພວກເຮົາໄດ້ຫຼົງໄປຈາກທາງເລີຍ ແຕ່ໃຫ້ພຣະຄຳຂອງພຣະເຈົ້າຊີ້ນຳພວກເຮົາ; ຢ່າໃຫ້ເຮົາຕາມທາງຂອງ . . . ບັນພະບຸລຸດ ຫຼື ສະແຫວງຫາສິ່ງທີ່ພວກເຂົາສະແຫວງຫາ, ແຕ່ໃຫ້ພວກເຮົາສະແຫວງຫາສິ່ງທີ່ພວກເຂົາຄວນໄດ້ເຮັດ.”[5] *{GC 248.1}*

ນອກຈາກທ່ານລາຕິເມີແລ້ວກໍມີອາຈານບານສ໌ (Barnes) ແລະ ທ້າວຟຣິດ (Frith), ເພື່ອນທີ່ສັດຊື່ຂອງທິນເດວ, ທີ່ລຸກຂຶ້ນມາປົກປ້ອງຄວາມຈິງ; ຕໍ່ຈາກພວກເຂົາກໍມີພີ່ນ້ອງຣິດລີ (Ridley) ແລະ ເຄຼນເມີ (Cranmer). ຜູ້ນຳການປະຕິຮູບໃນປະເທດອັງກິດເຫຼົ່ານີ້ແມ່ນຜູ້ຊາຍທີ່ມີການສຶກສາ; ພວກເຂົາສ່ວນຫຼາຍເຄີຍໄດ້ຮັບການຍົກຍ້ອງວ່າ ເປັນຄົນທີ່ມີຄວາມກະຕືລືລົ້ນໃນຄຣິສຕະຈັກໂຣມ. ພວກເຂົາມາຕໍ່ຕ້ານລະບອບສັນຕະປາປາຍ້ອນວ່າຮູ້ຈັກຄວາມຜິດພ້ຽນຂອງ “ສັນຕະສຳນັກ.” ຄວາມຄຸ້ນເຄີຍກ່ຽວກັບຄວາມເລິກລັບຂອງບາບີໂລນ ເຮັດໃຫ້ຄຳພະຍານຂອງພວກເຂົາທີ່ຕໍ່ຕ້ານຄຣິສຕະຈັກໂຣມ ມີນ້ຳໜັກຫຼາຍຂຶ້ນ. *{GC 248.2}*

ລາຕິເມີກ່າວວ່າ: “ບັດນີ້ຂ້າພະເຈົ້າຈະຖາມຄຳຖາມທີ່ແປກປະຫຼາດ. ແມ່ນຜູ້ໃດເປັນເຈົ້າຄະນະທີ່ກະຕືລືລົ້ນທີ່ສຸດ ຫຼື ຜູ້ນຳຄຣິສຕະຈັກທີ່ດຸໝັ່ນທີ່ສຸດໃນປະເທດອັງກິດທັງໝົດ? . . . ຂ້າພະເຈົ້າເຫັນທ່ານທັງຫຼາຍຕັ້ງໃຈຟັງ, ຢາກໃຫ້ຂ້າພະເຈົ້າບອກຊື່ຂອງເພິ່ນ; . . . ຂ້າພະເຈົ້າຈະບອກພວກທ່ານວ່າ ແມ່ນພະຍາມານນັ້ນເອງ. . . . ມັນບໍ່ເຄີຍລະເວັ້ນຈາກໜ້າທີ່ຂອງມັນ; ມັນປະຈຳການຢູ່ຕະຫຼອດເວລາ, . . . ບໍ່ເຄີຍປ່ອຍປະຄັນໄຖຂອງມັນຈັກເທື່ອ. . . . ມັນບໍ່ເຄີຍຢູ່ລ້າ; ຂ້າພະເຈົ້າຮັບຮອງໄດ້ເລີຍ, . . . ຖ້າພະຍາມານປະຈຳຢູ່ບ່ອນໃດ . . . ທີ່ນັ້ນກໍມີການເອົາປຶ້ມໜັງສືເກັບມ້ຽນ ແລະ ເອົາທຽນໄຂອອກມາແທນ, ມີການນຳພຣະຄຳພີໄປຖິ້ມ ແລະ ເອົາສາຍລູກປັດມາແທນທີ່, ມີການດັບແສງແຫ່ງຂ່າວປະເສີດ ແລ້ວຈູດທຽນແທນ; ແມ່ນແຕ່ຕອນທ່ຽງກໍຍັງຈູດທຽນກັນ; . . . ມີການເອົາໄມ້ກາງແຂນຂອງພຣະຄຣິສລົງ ແລ້ວເກັບ

[5] ຮິວ ລາຕິເມີ (Hugh Latimer), *ຄຳເທດສະໜາທຳອິດທີ່ປະກາດຕໍ່ໜ້າກະສັດເອັດເວີດທີ 6.*

ຄ່າໄຖ່ຄົນອອກຈາກແດນຊໍາລະ[6] ແທນ; . . . ແທນທີ່ຈະເອົາເສື້ອຜ້າໃຫ້ຄົນຍາກຈົນ ແລະ ຄົນພິການ ກໍ ມີການປະດັບປະດາຮູບເຄົາລົບໄວ້ຢ່າງງົດງາມ ເຊິ່ງຮູບປັ້ນເຫຼົ່ານັ້ນເຮັດດ້ວຍໄມ້ ແລະ ຫີນ; ທັງໝົດນີ້ ຄືການຍົກເອົາກົດ ແລະ ທໍານຽມຂອງມະນຸດຂຶ້ນ ໃນຂະນະທີ່ຢຽບທໍານຽມ ແລະ ພຣະຄໍາອັນສັກສິດ ຂອງພຣະເຈົ້າລົງ. . . . ໂອ້, ຢາກໃຫ້ພວກຜູ້ນໍາຄຣິສຕະຈັກມີຄວາມພາກພຽນທີ່ຈະຫວ່ານເມັດພືດແຫ່ງ ຄວາມຈິງ ເໝືອນທີ່ມານຊາຕານມີຄວາມດຸໝັ່ນໃນການຫວ່ານເມັດຫຍ້າ!”[7] *{GC 248.3}*

ຫຼັກການສໍາຄັນທີ່ນັກປະຕິຮູບເຫຼົ່ານີ້ຍຶດໄວ້ ເປັນຫຼັກການດຽວກັນທີ່ພວກຊາວໂວດົວ, ທ່ານ ໄວຄຼິບ, ຈອນ ຮັສ, ມາຕິນ ລູເທີ ແລະ ອຸນຣິກ ສວິງລີ ໄດ້ສອນ, ພ້ອມດ້ວຍທຸກຄົນທີ່ຮ່ວມມືກັບພວກເຂົາ ນັ້ນຄື ພຣະຄໍາພີເປັນບັນທັດຖານທີ່ບໍ່ຜິດພ້ຽນຂອງຄວາມເຊື່ອ ແລະ ການປະຕິບັດ. ພວກເຂົາປະຕິເສດບໍ່ ຍອມຮັບວ່າ ສັນຕະປາປາ, ສະພາຄຣິສຕະຈັກ, ບັນດານັກຂຽນຄຣິສຕຽນຍຸກເລີ່ມຕົ້ນ ແລະ ກະສັດ ທັງຫຼາຍມີສິດຄວບຄຸມຈິດສໍານຶກຜິດຊອບໃນເລື່ອງສາສະໜາ. ພຣະຄໍາພີເປັນມາດຕະຖານຂອງຄົນ ເຫຼົ່ານີ້, ພວກເຂົາຈຶ່ງທົດສອບຄໍາສອນ ແລະ ຂໍ້ອ້າງທຸກຢ່າງດ້ວຍພຣະຄໍາພີ. ຄວາມເຊື່ອໃນພຣະເຈົ້າ ແລະ ພຣະຄໍາຂອງພຣະອົງເປັນແຮງກໍາລັງໃຈໃຫ້ກັບບັນດາຊາຍຜູ້ບໍຣິສຸດ ໃນຂະນະທີ່ພວກເຂົາສະຫຼະ ຊີວິດຂອງຕົນທີ່ຫຼັກປະຫານ. ກ່ອນທີ່ແປວໄຟຈະດັບສູງຂອງພວກເຂົາ ລາຕິເມີໄດ້ກ່າວກັບເພື່ອນທີ່ຖືກ ປະຫານຊີວິດພ້ອມກັບເພິ່ນວ່າ: “ຈົ່ງມີກໍາລັງໃຈເຖີດ, ຂ້າພະເຈົ້າເຊື່ອວ່າ, ໂດຍພຣະຄຸນຂອງພຣະເຈົ້າ, ມື້ ນີ້ພວກເຮົາຈະຈູດແສງທຽນໃນປະເທດອັງກິດທີ່ຈະບໍ່ມີວັນຖືກດັບມອດໄປໄດ້ເລີຍ.”[8] *{GC 249.1}*

ໃນປະເທດສະກັອດແລນ ເມັດພືດແຫ່ງຄວາມຈິງທີ່ ທ່ານ ໂຄລໍາບາ (Columba) ກັບເພື່ອນຮ່ວມ ງານໄດ້ຫວ່ານນັ້ນ ບໍ່ເຄີຍຖືກທໍາລາຍໃຫ້ໝົດ. ຫຼັງຈາກຄຣິສຕະຈັກທັງຫຼາຍຂອງອັງກິດຍອມຈໍານົນຕໍ່ ຄຣິສຕະຈັກໂຣມໄປແລ້ວ, ຄຣິສຕະຈັກຕ່າງ ໆ ໃນສະກັອດແລນຍັງສາມາດຮັກສາອິດສະຫຼະພາບຂອງ ພວກເຂົາໄວ້ໄດ້ເປັນເວລາຫຼາຍຮ້ອຍປີ. ແຕ່ໃນສະຕະວັດທີ 12 ລະບອບສັນຕະປາປາໄດ້ຂຶ້ນມາ ມີອໍານາດທີ່ນັ້ນ ແລະ ບໍ່ມີປະເທດໃດທີ່ມັນສາມາດໃຊ້ອໍານາດຜະເດັດການໄດ້ຢ່າງເຕັມທີ່ເທົ່າກັບ ປະເທດສະກັອດແລນ, ບໍ່ມີບ່ອນໃດທີ່ມີຄວາມມືດມົວໄປກວ່າປະເທດສະກັອດແລນ. ແຕ່ກໍຍັງມີແສງ ສະຫວ່າງສ່ອງເຂົ້າມາໃນຄວາມມືດມົວນັ້ນ ເຊິ່ງໃຫ້ຄວາມຫວັງວ່າວັນໃໝ່ກໍາລັງຈະມາເຖິງ. ພວກ ລູກສິດຂອງໄວຄຼິບທີ່ເອີ້ນວ່າພວກໂລລາດ (Lollards) ໄດ້ເດີນທາງໄປສະກັອດແລນຈາກປະເທດ ອັງກິດ ພ້ອມດ້ວຍພຣະຄໍາພີ ແລະ ຄໍາສອນຂອງໄວຄຼິບ; ສິ່ງເຫຼົ່ານີ້ຊ່ວຍຮັກສາຄວາມຮູ້ໃນເລື່ອງ ຂ່າວປະເສີດເອົາໄວ້ ໂດຍໃນທຸກສະຕະວັດ ມີພະຍານ ແລະ ຜູ້ທີ່ຖືກຂ້າຕາຍເພາະຄວາມເຊື່ອໃນ ຂ່າວປະເສີດ. *{GC 249.2}*

ເມື່ອເລີ່ມຕົ້ນການປະຕິຮູບຄັ້ງໃຫຍ່ແຫ່ງສະຕະວັດທີ 16 ນັ້ນ ງານຂຽນຂອງລູເທີກໍຖືກນໍາເຂົ້າມາ, ຕໍ່ ມາກໍມີພຣະຄໍາພີໃໝ່ສະບັບແປພາສາອັງກິດຂອງທິນເດວ. ພວກຜູ້ນໍາຂອງຄຣິສຕະຈັກໂຣມບໍ່ໄດ້ສັ່ງເກດ ໜັງສືເຫຼົ່ານີ້ ທີ່ຖືກສົ່ງຕໍ່ຈາກມືສູ່ມືຢ່າງງຽບ ໆ ຜ່ານພູຜາ ແລະ ຮ່ອມພູ ເພື່ອຈູດປະກາຍໃຫ້ແກ່ ທອນໄຟແຫ່ງຄວາມຈິງ ທີ່ຈວນຈະດັບມອດຢູ່ໃນປະເທດສະກັອດແລນ ແລະ ເພື່ອລຶບລ້າງຜົນງານການ ຂົ່ມເຫັງ 400 ປີ ຂອງຄຣິສຕະຈັກໂຣມ. *{GC 249.3}*

---

[6] ຄຣິສຕະຈັກກາໂຕລິກສອນວ່າ ຖ້າຄົນບໍ່ຊົ່ວພໍທີ່ຈະຕົກນະຣົກ ຫຼື ບໍ່ດີພໍທີ່ຈະຂຶ້ນສະຫວັນ ກໍຈະລົງໄປຖືກທໍລະມານໃນ ແດນຊໍາລະ ແລະ ຖ້າຍາດຕິພີ່ນ້ອງບໍລິຈາກເງິນເຂົ້າກອງຄັງຂອງຄຣິສຕະຈັກ ກໍຈະສາມາດຫຼຸດເວລາທີ່ຄົນຮັກຂອງພວກເຂົາຕ້ອງຢູ່ໃນ ແດນຊໍາລະ.

[7] ຮິວ ລາຕິເມີ, *ຄໍາເທດສະໜາເລື່ອງຄັນໄຖ*.

[8] *ປະມວນງານຂຽນຂອງ ຮິວ ລາຕິເມີ*, ເຫຼັ້ມ 1, ໜ້າ 8.

ໃນຄາວນັ້ນ ເລືອດຂອງຜູ້ທີ່ຖືກຂ້າຕາຍຍ້ອນຄວາມເຊື່ອ ກໍເປັນແຮງກະຕຸ້ນໃໝ່ໃຫ້ແກ່ຂະບວນການ ປະຕິຮູບ. ພວກຜູ້ນຳໃນລະບອບສັນຕະປາປາໄດ້ຕື່ນຂຶ້ນຢ່າງກະທັນຫັນ ແລ້ວເຫັນເຖິງໄພອັນຕະລາຍ ຕໍ່ລະບອບຂອງພວກຕົນ, ຈຶ່ງຈັບບາງຄົນທີ່ໜ້າຍົກຍ້ອງນັບຖືທີ່ສຸດຂອງສະກັອດແລນມາປະຫານຊີວິດ. ແຕ່ຫຼັກປະຫານນັ້ນໄດ້ກາຍເປັນແທ່ນທຳມາດ ແລະ ກະບອກສຽງໃຫ້ກັບຄົນທີ່ຖືກປະຫານ; ສຽງ ຖ້ອຍຄຳຂອງພະຍານຝ່າຍຂ່າວປະເສີດທີ່ໃກ້ຕາຍນັ້ນ ໄດ້ຍິນຢູ່ທົ່ວແຜ່ນດິນ, ເຮັດໃຫ້ປະຊາຊົນຕື່ນຕົວ ດ້ວຍເປົ້າປະສົງທີ່ໜັກແໜ້ນທີ່ສຸດວ່າ ຈະຕ້ອງຫັກແອກຂອງຄຣິສຕະຈັກໂຣມໃຫ້ໄດ້. {GC 249.4}

ຈອນ ນັອຄຊ໌

ແຮມິນຕັນ (Hamilton) ແລະ ວີຊາດ (Wishart) ຜູ້ມີອຸປະນິໄສອັນສູງສົ່ງ ແລະ ຍົດອັນສູງ ສັກແຕ່ກຳເນີດ ພ້ອມດ້ວຍສາວົກຄົນອື່ນ ໆ ທີ່ມີຖານະຍາກຈົນໄດ້ສະຫຼະຊີວິດທີ່ຫຼັກປະຫານ. ແຕ່ຈາກ ເທົ່າຖ່ານແຫ່ງການເຜົາປະຫານ ທ່ານ ວີຊາດ ໃຫ້ຕາຍນັ້ນ ກໍມີຜູ້ໜຶ່ງຂຶ້ນມາທີ່ແປວໄຟບໍ່ສາມາດ ດັບສຽງຂອງເພິ່ນໄດ້, ເປັນຜູ້ທີ່ພຣະເຈົ້າຊົງໃຊ້ເພື່ອທຳລາຍລະບອບສັນຕະປາປາໃນສະກັອດແລນໃຫ້ ໝົດສິ້ນ. {GC 250.1}

ຈອນ ນັອຄຊ໌ ໄດ້ຫັນຈາກປະເພນີ ແລະ ການປະຕິບັດທຳເພື່ອເຂົ້າເຖິງພຣະເຈົ້າຂອງຄຣິສຕະຈັກ ໂຣມ ເພື່ອຫຼໍ່ລ້ຽງຈິດວິນຍານດ້ວຍຄວາມຈິງຈາກພຣະຄຳຂອງພຣະເຈົ້າ; ຄຳສອນຂອງວີຊາດໄດ້ຊ່ວຍ ໃຫ້ເພິ່ນຢືນຢັນຄວາມຕັ້ງໃຈທີ່ຈະຖອນຕົວອອກຈາກຄຣິສຕະຈັກໂຣມ ແລະ ຈະເຂົ້າຮ່ວມກັບພວກ ນັກປະຕິຮູບທີ່ຖືກຂົ່ມເຫັງ. {GC 250.2}

ໝູ່ເພື່ອນຂອງ ຈອນ ນັອຄຊ໌ ຮຽກຮ້ອງເພິ່ນໃຫ້ຮັບຕຳແໜ່ງນັກເທດ ແຕ່ເພິ່ນຮູ້ສຶກສະເທືອນໃຈ ທີ່ຈະມີຄວາມຮັບຜິດຊອບເຊັ່ນນັ້ນ; ເພິ່ນຕ້ອງຕໍ່ສູ້ກັບຕົວເອງຢ່າງທຸກໃຈຕາມລຳພັງຢູ່ຫຼາຍວັນກວ່າ ຈະຍອມຮັບໄດ້. ແຕ່ເມື່ອໄດ້ຮັບຕຳແໜ່ງນັ້ນແລ້ວ ເພິ່ນກໍກ້າວໄປຂ້າງໜ້າດ້ວຍຄວາມຕັ້ງໃຈທີ່ບໍ່ ປ່ຽນແປງ ແລະ ຄວາມກ້າຫານທີ່ບໍ່ຫວັ່ນໄຫວຕາບເທົ່າຊີວິດຂອງເພິ່ນ. ນັກປະຕິຮູບຜູ້ຈິງໃຈຄົນນີ້ ບໍ່ຢ້ານກົວມະນຸດ, ກອງໄຟປະຫານລຸກໄໝ້ຢູ່ອ້ອມຮອບເພິ່ນ ແຕ່ສິ່ງເຫຼົ່ານີ້ມີແຕ່ກະຕຸ້ນໃຫ້ເພິ່ນມີຄວາມ ກະຕືລືລົ້ນຫຼາຍຂຶ້ນເທົ່ານັ້ນ. ຂວານປະຫານຂອງພວກຜະເດັດການຖືຂົ່ມຂູ່ຢູ່ເໜືອຫົວຂອງເພິ່ນ, ແຕ່ ເພິ່ນຍັງຢືນຢັດຕໍ່ໄປ ແລະ ໂຈມຕີທາງຊ້າຍທາງຂວາເພື່ອທຳລາຍການຂາບໄຫວ້ຮູບເຄົາລົບ. {GC 250.3}

ເມື່ອຖືກນຳມາປະເຊີນໜ້າກັບຣາຊິນີແຫ່ງປະເທດສະກັອດແລນ, ຈອນ ນັອຄຊ໌ ໄດ້ເປັນພະຍານຝ່າຍ ຄວາມຈິງຢ່າງບໍ່ຫວັ່ນໄຫວ, ເຊິ່ງມີຄົນລະດັບຜູ້ນຳຝ່າຍໂປຣແຕັສຕັງຫຼາຍຄົນເຄີຍອົກສັ່ນຂວັນຫາຍຕໍ່ໜ້າ ຣາຊິນີຜູ້ນີ້. ເພິ່ນບໍ່ຫຼົງຄົນປາກຫວານ ແລະ ບໍ່ຢ້ານກົວຕໍ່ການຖືກຂົ່ມຂູ່. ຣາຊິນີກໍຕັ້ງຂໍ້ກ່າວຫາວ່າເພິ່ນ ເປັນຄົນນອກຮີດ ແລະ ໄດ້ສອນປະຊາຊົນໃຫ້ຮັບເຊື່ອໃນສາສະໜາທີ່ລັດປະກາດຫ້າມ ທັງໄດ້ລະເມີດ ທຳມະບັນຍັດຂອງພຣະເຈົ້າທີ່ສັ່ງໃຫ້ປະຊາຊົນເຊື່ອຟັງກະສັດຜູ້ປົກຄອງບ້ານເມືອງ. ສ່ວນ ອາຈານ ນັອຄຊ໌ ຕອບຂໍ້ກ່າວຫານັ້ນຢ່າງໜັກແໜ້ນວ່າ: {GC 250.4}

“ໃນເມື່ອສາສະໜາທີ່ຖືກຕ້ອງບໍ່ໄດ້ຮັບກຳລັງ ຫຼື ສິດອຳນາດຈາກກະສັດຜູ້ປົກຄອງຝ່າຍໂລກຕັ້ງແຕ່ ຕົ້ນ ແຕ່ໄດ້ຮັບມາຈາກພຣະເຈົ້າອົງນິຣັນແຕ່ຜູ້ດຽວ; ສະນັ້ນ, ປະຊາຊົນບໍ່ຄວນປັບປ່ຽນຄວາມເຊື່ອຖືຕາມ ອາລົມເຈົ້າໜ້າທີ່ບ້ານເມືອງ. ເພາະວ່າຜູ້ນຳປະເທດມັກຈະເປັນຄົນທີ່ຮູ້ໜ້ອຍທີ່ສຸດໃນເລື່ອງສາສະໜາທີ່ ແທ້ຈິງຂອງພຣະເຈົ້າ. . . . ຖ້າລູກຫຼານທັງໝົດຂອງອັບຣາຮາມນັບຖືສາສະໜາຂອງຟາໂຣ ຜູ້ເປັນກະສັດ ປົກຄອງພວກເຂົາເປັນເວລາດົນນານແລ້ວ, ຂ້າພະເຈົ້າຂໍຖາມທ່ານວ່າ: ປັດຈຸບັນຈະເຫຼືອສາສະໜາອັນ ໃດໃນໂລກ? ຫຼືວ່າ ຖ້າມະນຸດທຸກຄົນໃນສະໄໝຂອງພວກອັກຄະສາວົກ ລ້ວນແຕ່ນັບຖືສາສະໜາ ຂອງຈັກກະພັດໂຣມ ແລ້ວຕອນນີ້ຈະມີສາສະໜາໃດແດ່ຢູ່ເທິງພື້ນແຜ່ນດິນໂລກ? . . . ສະນັ້ນ, ທ່ານ

ພຣະຣາຊິນີເອີຍ ທ່ານຄົງເຫັນໄດ້ວ່າ ປະຊາຊົນບໍ່ໄດ້ຖືກຜູກມັດກັບເຈົ້າໜ້າທີ່ໃນເລື່ອງຄວາມເຊື່ອຖືທາງສາສະໜາ, ແຕ່ໃນຂະນະດຽວກັນພຣະເຈົ້າຊົງບັນຊາໃຫ້ພວກເຂົາເຊື່ອຟັງເຈົ້າໜ້າທີ່ເຫຼົ່ານັ້ນ." {GC 250.5}

ຣາຊິນີມາຣີກ່າວວ່າ: "ພວກເຈົ້າຕີຄວາມໝາຍພຣະຄຳພີຢ່າງໜຶ່ງ ແລະ ພວກ ອາຈານຂອງຄຣິສຕະຈັກໂຣມັນກາໂຕລິກກໍຕີຄວາມອີກຢ່າງໜຶ່ງ, ເຮົາຄວນເຊື່ອໃຜ ແລະ ແມ່ນໃຜຈະເປັນຜູ້ຕັດສິນ?" {GC 251.1}

ອາຈານນັອຄຊ໌ ຕອບວ່າ: "ທ່ານຈົ່ງເຊື່ອພຣະເຈົ້າທີ່ຊົງກ່າວໄວ້ຢ່າງຈະແຈ້ງໃນພຣະຄຳຂອງພຣະອົງ, ຄຳສອນອັນໃດທີ່ນອກເໜືອຈາກພຣະຄຳນັ້ນກໍບໍ່ຕ້ອງເຊື່ອເລີຍ. ພຣະຄຳຂອງພຣະເຈົ້າມີຄວາມຊັດເຈນແຈ່ມແຈ້ງໃນຕົວຂອງມັນເອງ ແລະ ຖ້າຫາກມີຂໍ້ຄວາມໃດເຂົ້າໃຈຍາກ ພຣະວິນຍານບໍຣິສຸດຊົງອະທິບາຍຢູ່ໃນຂໍ້ອື່ນ ເພາະພຣະວິນຍານບໍ່ເຄີຍຂັດແຍ້ງກັບພຣະອົງເອງ; ສະນັ້ນ, ກໍຈະບໍ່ມີຂໍ້ສົງໄສນອກຈາກຄົນທີ່ຈົງໃຈທີ່ຈະບໍ່ເຂົ້າໃຈ."[9] {GC 251.2}

ນັ້ນຄືຄວາມຈິງທີ່ນັກປະຕິຮູບນັອຄຊ໌ໄດ້ສ່ຽງຊີວິດ ເພື່ອຕອບຣາຊິນີ ໂດຍບໍ່ໄດ້ສະທ້ານຢ້ານກົວແຕ່ຢ່າງໃດ. ດ້ວຍຄວາມກ້າຫານທີ່ບໍ່ຫວັ່ນໄຫວແບບດຽວກັນ ເພິ່ນໄດ້ຮັກສາຈຸດປະສົງຂອງເພິ່ນເອົາໄວ້, ຄື ໄດ້ອະທິຖານ ແລະ ຕໍ່ສູ້ເພື່ອອົງພຣະຜູ້ເປັນເຈົ້າ ຈົນກວ່າປະເທດສະກັອດແລນໄດ້ຫຼຸດພົ້ນຈາກລະບອບສັນຕະປາປາໃນທີ່ສຸດ. {GC 251.3}

ສ່ວນໃນປະເທດອັງກິດ ເມື່ອຮັບເອົານິກາຍໂປຣແຕັສຕັງມາເປັນສາສະໜາປະຈຳຊາດ ການກົດຂີ່ຂົ່ມເຫັງກໍຫຼຸດໜ້ອຍຖອຍລົງ ແຕ່ບໍ່ໄດ້ຫາຍໄປທັງໝົດ. ເຖິງແມ່ນວ່າຄົນອັງກິດໄດ້ປະຕິເສດຄຳສອນຫຼາຍຢ່າງຂອງຄຣິສຕະຈັກໂຣມ, ແຕ່ກໍຍັງເກັບຮັກສາຮູບແບບພິທີກຳໄວ້ເປັນຈຳນວນຫຼາຍ. ພວກເຂົາປະຕິເສດວ່າສັນຕະປາປາມີອຳນາດສູງສຸດ, ແຕ່ກັບຕັ້ງກະສັດມາເປັນຫົວໜ້າສູງສຸດຂອງຄຣິສຕະຈັກແທນ. ການປະຕິບັດຂອງຄຣິສຕະຈັກຍັງຫ່າງຈາກຄວາມບໍຣິສຸດ ແລະ ຄວາມລຽບງ່າຍຂອງຂ່າວປະເສີດຢ່າງໃຫຍ່ຫຼວງ. ຄົນໃນສະໄໝນັ້ນຍັງບໍ່ເຂົ້າໃຈຫຼັກການອັນຍິ່ງໃຫຍ່ເລື່ອງເສລີພາບທາງສາສະໜາ. ເຖິງແມ່ນວ່າ ຜູ້ປົກຄອງຊາວໂປຣແຕັສຕັງບໍ່ຄ່ອຍໄດ້ນຳໃຊ້ວິທີການໂຫດຮ້າຍອັນໜ້າຢ້ານກົວ ທີ່ຄຣິສຕະຈັກໂຣມໃຊ້ເພື່ອຕໍ່ຕ້ານຄຳສອນນອກຮີດກໍຕາມ, ແຕ່ໃນເວລານັ້ນ ບໍ່ມີໃຜຍອມຮັບວ່າມະນຸດທຸກຄົນມີສິດທິທີ່ຈະນະມັດສະການພຣະເຈົ້າຕາມຈິດສຳນຶກຜິດຊອບຂອງຕົນ. ທຸກຄົນຖືກບັງຄັບໃຫ້ຮັບເອົາຄຳສອນ ແລະ ເຮັດຕາມພິທີກຳນະມັດສະການທີ່ຄຣິສຕະຈັກເຊິ່ງຝ່າຍການປົກຄອງກຳນົດໄວ້. ຜູ້ທີ່ຄັດຄ້ານໄດ້ຖືກຂົ່ມເຫັງບໍ່ຫຼາຍກໍໜ້ອຍ ແລະ ເປັນດັ່ງນັ້ນສືບຕໍ່ຫຼາຍຮ້ອຍປີ. {GC 251.4}

ສະຕະວັດທີ 17

ໃນສະຕະວັດທີ 17 ມີອາຈານປະຈຳໂບດຫຼາຍພັນຄົນຖືກໄລ່ອອກຈາກຕຳແໜ່ງ. ປະຊາຊົນຖືກຫ້າມເຂົ້າຮ່ວມປະຊຸມທາງສາສະໜາທີ່ຄຣິສຕະຈັກບໍ່ໄດ້ອະນຸຍາດ, ຖ້າຜູ້ໃດຝ່າຝືນກໍສ່ຽງທີ່ຈະຖືກປັບໃໝຢ່າງໜັກ, ຂັງຄຸກ ຫຼື ຖືກເນລະເທດ. ຄົນສັດຊື່ທັງຫຼາຍທີ່ບໍ່ສາມາດຫຼີກເວັ້ນຈາກການເຕົ້າໂຮມກັນເພື່ອນະມັດສະການພຣະເຈົ້າ ຈຳເປັນຕ້ອງພົບກັນຢູ່ໃນຮ່ອມມືດ ຫຼື ໃນຫ້ອງນ້ອຍໃຕ້ຫຼັງຄາ ຫຼື ບາງຄັ້ງແມ່ນພົບກັນທ່ຽງຄືນໃນປ່າໄມ້. ລູກທັງຫຼາຍຂອງພຣະເຈົ້າທີ່ຖືກຂົ່ມເຫັງ ແລະ ກະຈັດກະຈາຍຢູ່ນັ້ນ ໄດ້ມາເຕົ້າໂຮມກັນໃນສ່ວນທີ່ເລິກຂອງປ່າດົງ ອັນເປັນວິຫານທີ່ພຣະອົງຊົງເປັນຜູ້ສ້າງຂຶ້ນ; ພວກເຂົາຮວມຕົວກັນເພື່ອອະທິຖານ ແລະ ສັນລະເສີນພຣະເຈົ້າ. ເຖິງແມ່ນວ່າຄົນເຫຼົ່ານີ້ໄດ້ລະມັດລະວັງເປັນພິເສດກໍຕາມ, ແຕ່ມີຫຼາຍຄົນທີ່ທົນທຸກທໍລະມານຍ້ອນຄວາມເຊື່ອສັດທາຂອງພວກເຂົາ; ມີຄົນຕິດຄຸກ

[9] ດາວິດ ແລງ (David Laing), *ຮວບຮວມງານຂຽນຂອງ ຈອນ ນັອຄຊ໌*, ເຫຼັ້ມ 2, ໜ້າ 281, 284.

ຈົນແໜ້ນໜາ; ມີການບັງຄັບໃຫ້ຄົນໃນຄອບຄົວຕ້ອງແຍກຈາກກັນ ແລະ ຫຼາຍຄົນຖືກເນລະເທດໄປຢູ່ຕ່າງແດນ. ແຕ່ພຣະເຈົ້າຊົງຢູ່ກັບຄົນຂອງພຣະອົງ ແລະ ການຂົ່ມເຫັງບໍ່ສາມາດລະງັບສຽງຄຳພະຍານຂອງພວກເຂົາໄດ້. ຫຼາຍຄົນຖືກຂັບໄລ່ໃຫ້ຂ້າມທະເລໄປອາເມຣິກາ ແລະ ໄດ້ວາງຮາກຖານຂອງເສລີພາບທາງດ້ານພົນລະເຮືອນ ແລະ ສາສະໜາ ເຊິ່ງເປັນຄວາມເຂັ້ມແຂງ ແລະ ສັກສີຂອງປະເທດອາເມຣິກາ. {GC 252.1}

ເຊັ່ນດຽວກັບໃນສະໄໝຂອງພວກອັກຄະສາວົກ, ເປັນອີກຄັ້ງໜຶ່ງທີ່ການຂົ່ມເຫັງຊ່ວຍຂະຫຍາຍການປະກາດຂ່າວປະເສີດ. ຈອນ ບันยัน (John Bunyan) ຖືກຈັບຂັງໃນຄຸກມີດແຫ່ງເມືອງເບດຟອດ (Bedford) ເຊິ່ງທີ່ນັ້ນມີພວກອາດຊະຍາກອນ ແລະ ຄົນບໍ່ມີສິນທຳຖືກຂັງຢູ່ຢ່າງແໜ້ນໜາ, ແຕ່ເພິ່ນໄດ້ສຳຜັດເຖິງບັນຍາກາດແຫ່ງສະຫວັນ ແລະ ໃນຂະນະທີ່ຢູ່ໃນຄຸກນັ້ນ ເພິ່ນໄດ້ຂຽນໜັງສືອຸປະມາອຸປະໄມ ເລື່ອງການເດີນທາງຈາກດິນແດນແຫ່ງຄວາມພິນາດໄປສູ່ເມືອງສຸກກະເສີມ. ນັບເປັນເວລາກວ່າ 200 ປີ ທີ່ສຽງຈາກຄຸກແຫ່ງເມືອງເບດຟອດນັ້ນ ໄດ້ໜູນຈິດໜູໃຈມະນຸດດ້ວຍພະລັງຣິດເດດ. ໜັງສື *ປິດສະໜາທຳ* ກັບໜັງສື *ຄົນບາບຕົວການໄດ້ຮັບພຣະຄຸນເຫຼືອລົ້ນ*[10] ນັ້ນໄດ້ນຳພາຄົນຈຳນວນຫຼວງຫຼາຍມາເຂົ້າສູ່ທາງແຫ່ງຊີວິດ. {GC 252.2}

ອາຈານ ແບັກສະເຕີ (Baxter), ທ່ານ ຟຼາເວ (Flavel), ທ້າວ ອາເລນ (Alleine) ແລະ ຜູ້ຊາຍຄົນອື່ນທີ່ມີຄວາມສາມາດ, ການສຶກສາ ແລະ ປະສົບການອັນເລິກເຊິ່ງໃນຊີວິດຄຣິສຕຽນໄດ້ຂຶ້ນມາປົກປ້ອງ "ຄວາມເຊື່ອເຊິ່ງພຣະເຈົ້າໄດ້ມອບໃຫ້ແກ່ປະຊາຊົນຂອງພຣະອົງເທື່ອດຽວເປັນການສິ້ນສຸດ." (ຢູດາ 1:3). ຜົນງານຂອງຄົນເຫຼົ່ານີ້ທີ່ຖືກເຈົ້າໜ້າທີ່ຂັບໄລ່ ແລະ ຫ້າມເຄື່ອນໄຫວນັ້ນ ຈະບໍ່ມີວັນຖືກທຳລາຍ. ໜັງສື *ນ້ຳພຸແຫ່ງຊີວິດ* ແລະ *ວິທີການແຫ່ງພຣະຄຸນ* ຂອງ ທ່ານ ຟຼາເວ ໄດ້ສອນຄົນຈຳນວນຫຼວງຫຼາຍເຖິງວິທີມອບໃຈໃຫ້ພຣະຄຣິສ. ສ່ວນໜັງສື *ປະຕິຮູບສາສະໜາຈານ* ຂອງອາຈານ ແບັກສະເຕີນັ້ນ ກໍເປັນພຣະພອນໃຫ້ແກ່ຄົນຈຳນວນຫຼວງຫຼາຍ ທີ່ປາຖະໜາທີ່ຈະຟື້ນຟູວຽກງານການຮັບໃຊ້ພຣະເຈົ້າ ແລະ ໜັງສື *ການພັກຜ່ອນອັນຮັບຂອງຜູ້ຊອບທຳ* ໄດ້ນຳຫຼາຍຄົນເຖິງການພັກເຊົາເຊິ່ງ "ຍັງມີສຳລັບໄພ່ພົນຂອງພຣະເຈົ້າ." (ເຮັບເຣີ 4:9). {GC 252.3}

ໜຶ່ງຮ້ອຍປີຕໍ່ມາ ໃນຊ່ວງເວລາແຫ່ງຄວາມມືດມົນຝ່າຍຈິດວິນຍານ, ອາຈານ ວິດຟຽວ (Whitefield) ແລະ ສອງອ້າຍນ້ອງເວສະລີ (Wesley) ຂຶ້ນມາສ່ອງແສງສະຫວ່າງເພື່ອພຣະເຈົ້າ. ພາຍໃຕ້ການປົກຄອງຂອງຄຣິສຕະຈັກທີ່ລັດຖະບານຮັບຮອງນັ້ນ ປະຊາຊົນອັງກິດໄດ້ຕົກຢູ່ໃນສະພາບທີ່ຖົດຖອຍຝ່າຍຈິດວິນຍານ ຈົນບໍ່ຄ່ອຍແຕກຕ່າງຫຍັງກັບຄົນທີ່ບໍ່ນັບຖືພຣະເຈົ້າ. ສາສະໜາຈານ ແລະ ນັກສາສະໜາສາດສ່ວນຫຼາຍ ເນັ້ນການເຂົ້າເຖິງຄວາມຈິງຜ່ານການສຶກສາທຳມະຊາດ. ຄົນຊັ້ນສູງກໍດູຖູກເລື່ອງທຳມະ ເພາະຖືວ່າເປັນເລື່ອງຄັ່ງສາສະໜາທີ່ຕ່ຳເກີນໄປສຳລັບຕົນ. ສ່ວນພວກຄົນຊັ້ນລຸ່ມກໍຂາດການສຶກສາ ແລະ ປ່ອຍຕົວໃນຄວາມບາບ, ໃນຂະນະທີ່ຄຣິສຕະຈັກບໍ່ມີຄວາມກ້າຫານ ຫຼື ຄວາມເຊື່ອໝັ້ນພໍ ທີ່ຈະສະໜັບສະໜູນພາລະກິດໃນການປະກາດຄວາມຈິງທີ່ຖືກປະຖິ້ມໃຫ້ຕົກຕ່ຳ. {GC 253.1}

ລອດພົ້ນໂດຍທາງຄວາມເຊື່ອ

ຫຼັກຄຳສອນອັນສຳຄັນເລື່ອງຄວາມຊອບທຳໂດຍຄວາມເຊື່ອທີ່ລູເທີສອນຢ່າງແຈ່ມແຈ້ງນັ້ນ ເກືອບຖືກຄຣິສຕຽນທັ້ງຫຼາຍລືມຈົນໝົດ ແລະ ມີການຮັບເອົາຫຼັກການຈາກຄຣິສຕະຈັກໂຣມທີ່ສອນໃຫ້ເພິ່ງພາການປະພຶດປະຕິບັດເພື່ອຄວາມລອດແທນ. ທ່ານ ວິດຟຽວ ແລະ ສອງອ້າຍນ້ອງເວສະລີເປັນສະມາຊິກ

[10] *Pilgrim's Progress* ແລະ *Grace Abounding to the Chief of Sinners*.

ຄຣິສຕະຈັກທີ່ລັດຖະບານຮັບຮອງ; ພວກເຂົາສະແຫວງຫາທີ່ຈະເປັນທີ່ພໍພຣະໄທຂອງພຣະເຈົ້າດ້ວຍຄວາມຈິງໃຈ; ພວກເຂົາເຄີຍຖືກສອນວ່າການທີ່ຈະເປັນທີ່ພໍພຣະໄທຂອງພຣະເຈົ້າໄດ້ນັ້ນ ກໍຕ້ອງດຳເນີນຊີວິດບໍຣິສຸດ ແລະ ເຮັດຕາມຂໍ້ກຳນົດທາງສາສະໜາ. {GC 253.2}

ຄັ້ງໜຶ່ງ ຊານສ໌ ເວສະລີ (Charles Wesley) ລົ້ມປ່ວຍ ແລະ ຄາດວ່າຄວາມຕາຍຢູ່ໃກ້ແຄ່ເອື້ອມ, ມີຄົນຖາມວ່າ ຮາກຖານຄວາມຫວັງຂອງເພິ່ນທີ່ຈະໄດ້ຮັບຊີວິດນິຣັນນັ້ນແມ່ນຫຍັງ. ເພິ່ນຕອບວ່າ: “ຂ້າພະເຈົ້າໄດ້ຮັບໃຊ້ພຣະເຈົ້າສຸດຄວາມພະຍາຍາມຂອງຂ້າພະເຈົ້າ.” ເມື່ອຜູ້ຖາມມີທ່າທີເໝືອນຈະບໍ່ພໍໃຈໃນຄຳຕອບ, ເວສະລີຄິດໃນໃຈວ່າ: “ເອົ້າ! ຄວາມພະຍາຍາມຂອງຂ້ອຍບໍ່ພໍທີ່ຈະໃຫ້ຄວາມຫວັງຫວາ? ຄົນນີ້ຈະປຸ້ນເອົາຄວາມພະຍາຍາມໄປຈາກຂ້ອຍຫວາ? ຂ້ອຍມີແຕ່ສິ່ງນີ້ສິ່ງດຽວທີ່ຈະເພິ່ງໄດ້ ບໍ່ມີສິ່ງອື່ນ.”[11] ຄວາມມືດມົດປົກຄຸມເໜືອຄຣິສຕະຈັກໃນສະໄໝນັ້ນຢ່າງແໜ້ນໜາ ຈົນບົດບັງສະຫງ່າຣາສີແຫ່ງການຊົ່ງໄຖ່ຂອງພຣະຄຣິສ; ຄົນທັງຫຼາຍຈຶ່ງຫັນໄປຈາກຄວາມຫວັງດຽວທີ່ຈະຮັບຄວາມລອດພົ້ນໄດ້ ຄືການເພິ່ງພາໃນພຣະໂລຫິດຂອງພຣະຜູ້ໄຖ່ທີ່ຖືກຕຶງໄວ້ເທິງໄມ້ກາງແຂນ. {GC 253.3}

ພຣະເຈົ້າຊົງນຳ ຈອນ ເວສະລີ ແລະ ເພື່ອນຮ່ວມງານຂອງເພິ່ນໃຫ້ມາເຖິງຄວາມເຂົ້າໃຈທີ່ວ່າ ສາສະໜາອັນແທ້ຈິງເປັນເລື່ອງຂອງຈິດໃຈ; ແລະ ພຣະບັນຍັດຂອງພຣະເຈົ້າບໍ່ພຽງແຕ່ຄອບຄຸມວາຈາ ແລະ ການກະທຳເທົ່ານັ້ນ ແຕ່ຍັງຄອບຄຸມໄປເຖິງຄວາມນຶກຄິດດ້ວຍ. ເມື່ອພວກເຂົາເຫັນວ່າການມີຈິດໃຈບໍຣິສຸດເປັນສິ່ງທີ່ຈຳເປັນ ພ້ອມກັບຕ້ອງມີການປະພຶດພາຍນອກທີ່ຖືກຕ້ອງດ້ວຍ, ພວກເຂົາຈຶ່ງມຸ່ງໜ້າໄປສູ່ຊີວິດໃໝ່ດ້ວຍຄວາມຕັ້ງໃຈ. ພວກເຂົາໃຊ້ຄວາມອຸດສາຫະພາກພຽນ ແລະ ທຸ້ມເທແຮງອະທິຖານ ເພື່ອດັບຄວາມຊົ່ວໃນຈິດໃຈຝ່າຍເນື້ອໜັງ. ພວກເຂົາດຳເນີນຊີວິດດ້ວຍການປະຕິເສດຕົນເອງ, ການທຳບຸນສຸນທານ, ການຖ່ອມຕົນ ແລະ ການຖືຮັກສາທຸກມາດຕະການຢ່າງເຄັ່ງຄັດທີ່ຄິດວ່າຈະຊ່ວຍພວກເຂົາໄດ້ໃນສິ່ງທີ່ຕົນປາຖະໜາ ກໍຄືຄວາມບໍຣິສຸດທີ່ສາມາດເຮັດໃຫ້ພຣະເຈົ້າພໍພຣະໄທ, ແຕ່ກໍບໍ່ໄດ້ຮັບໃນສິ່ງທີ່ພວກເຂົາສະແຫວງຫາ. ຄວາມພະຍາຍາມທີ່ຈະປົດປ່ອຍຕົວເອງຈາກການຖືກກ່າວໂທດອັນເນື່ອງຈາກຄວາມບາບກໍບໍ່ໄດ້ຜົນ, ຄວາມພະຍາຍາມທີ່ຈະຫຼຸດພົ້ນຈາກອຳນາດຂອງຄວາມບາບ ກໍບໍ່ເກີດປະໂຫຍດ. ການດີ້ນຣົນຕໍ່ສູ້ນີ້ ເໝືອນປະສົບການຂອງລູເທີໃນຫ້ອງປະຕິບັດທຳທີ່ເມືອງເອີເຟີດ (Erfurt), ເປັນຄຳຖາມດຽວກັນທີ່ທໍລະມານຈິດໃຈຂອງເພິ່ນ, “ຄົນເຮົາຈະຊອບທຳຈຳເພາະພຣະພັກພຣະເຈົ້າໄດ້ຢ່າງໃດ?” (ໂຢບ 9:2 ດັດແປງຈາກສະບັບ TKJV). {GC 254.1}

ໄຟແຫ່ງຄວາມຈິງຂອງພຣະເຈົ້າ ເກືອບດັບມອດຢູ່ເທິງແທ່ນບູຊາຂອງຊາວໂປຣແຕັສຕັງ, ແຕ່ຄວາມຈິງນັ້ນໄດ້ຖືກສຸມໄຟໃໝ່ ດ້ວຍກະບອງໄຟບູຮານທີ່ຖ່າຍທອດມາແຕ່ລະຍຸກສະໄໝຈາກຄຣິສຕຽນຊາວໂບຮີເມຍ. ຫຼັງຈາກການປະຕິຮູບຄັ້ງໃຫຍ່ໃນສະຕະວັດທີ 16 ຊາວໂປຣແຕັສຕັງໃນປະເທດໂບຮີເມຍ ຖືກພັກພວກຝ່າຍຄຣິສຕະຈັກໂຣມກຳຈັດຈົນໝົດສິ້ນ. ທຸກຄົນທີ່ບໍ່ຍອມປະຕິເສດຄວາມຈິງກໍຕ້ອງອົບພະຍົບຫຼົບໜີ. ບາງຄົນໜີໄປລີ້ໄພໃນແຂວງແຊັກຊັນນີ ແລະ ສືບຕໍ່ຮັກສາຄວາມເຊື່ອທີ່ຮັບມາແຕ່ສະໄໝບູຮານ. ແສງສະຫວ່າງທີ່ສ່ອງມາຍັງ ຈອນ ເວສະລີ ແລະ ເພື່ອນຮ່ວມງານຂອງເພິ່ນ ກໍມາຈາກລູກຫຼານຂອງຄຣິສຕຽນເຫຼົ່ານີ້. {GC 254.2}

ຫຼັງຈາກທັງ ຈອນ ແລະ ຊານສ໌ ເວສະລີ ໄດ້ຮັບການເຈີມຕັ້ງໃຫ້ເປັນສາສະໜາຈານ, ພວກເຂົາກໍຖືກສົ່ງໄປປະກາດຢູ່ອາເມຣິກາ; ມີຊາວໂມເຣເວຍຈາກປະເທດເຢຍລະມັນກຸ່ມໜຶ່ງຢູ່ໃນເຮືອລຳນັ້ນ. ຂະນະທີ່ແລ່ນເຮືອຂ້າມມະຫາສະໝຸດ ກໍເກີດລົມພະຍຸຮ້າຍແຮງ ເຊິ່ງເຮັດໃຫ້ ຈອນ ເວສະລີ ຕ້ອງ

[11] ຈອນ ໄວເຮດ (John Whitehead), *ຊີວິດຂອງ ຊານສ໌ ເວສະລີ*, ໜ້າ 102.

ປະເຊີນໜ້າກັບຄວາມຕາຍ; ເພິ່ນຮູ້ສຶກວ່າບໍ່ມີຄວາມໝັ້ນໃຈວ່າພຣະເຈົ້າຊົງຍອມຮັບເພິ່ນ. ແຕ່ຊາວເຢຍລະມັນພັດກົງກັນຂ້າມ; ພວກເຂົາສະແດງເຖິງຄວາມສະຫງົບ ແລະ ຄວາມໄວ້ວາງໃຈທີ່ເພິ່ນເອງບໍ່ຄຸ້ນເຄີຍ. *{GC 254.3}*

ເພິ່ນກ່າວວ່າ: "ກ່ອນທີ່ຈະເກີດພະຍຸດົນພໍສົມຄວນ, ຂ້າພະເຈົ້າໄດ້ສັງເກດຄວາມຈິງຈັງອັນໜັກແໜ້ນຂອງພວກເຂົາ. ຄົນເຫຼົ່ານີ້ໄດ້ພິສູດເຖິງຄວາມຖ່ອມໃຈຢ່າງຕໍ່ເນື່ອງ ໂດຍການຮັບໃຊ້ແຂກເຮືອຄົນອື່ນ ໃນເລື່ອງທີ່ບໍ່ມີແຂກຊາວອັງກິດຄົນໃດຍອມເຮັດ; ນອກຈາກນັ້ນ, ພວກເຂົາບໍ່ຍອມຮັບເງິນ ແຕ່ພັດເວົ້າວ່າ ການເຮັດຢ່າງນັ້ນດີຕໍ່ຈິດໃຈອັນເຢີ້ຫຍິ່ງຂອງຕົນເອງ ເພາະພຣະຜູ້ຊ່ວຍໃຫ້ລອດຊົງຮັກ ແລະ ຊົງຊ່ວຍພວກເຂົາຫຼາຍກວ່ານັ້ນ. ທຸກມື້ທຸກວັນມີໂອກາດສະແດງເຖິງຄວາມອ່ອນໂຍນ ແລະ ໃຈເມດຕາອັນບໍ່ປ່ຽນແປງ ແມ່ນຈະຖືກຄົນອື່ນທຳຮ້າຍກໍຕາມ. ຖ້າຖືກບຽດ, ຖືກຕີ ຫຼື ຖືກຢູ່ໃຕ້ລົ້ມລົງ, ພວກເຂົາກໍຈະລຸກຂຶ້ນໃໝ່ ແລະ ຍ່າງໄປ ໂດຍບໍ່ຈົ່ມບໍ່ວ່າຫຍັງເລີຍ. ບັດນີ້ໄດ້ໂອກາດພິສູດວ່າ ພວກເຂົາໄດ້ຮັບໄຊຊະນະເໜືອຄວາມຢ້ານກົວ ເໜືອນທີ່ໄດ້ຮັບເໜືອຄວາມຫຍິ່ງ, ຄວາມໂກດຮ້າຍ ແລະ ການແກ້ແຄ້ນຫຼືບໍ່. ໃນຂະນະທີ່ນະມັດສະການ ແລະ ກຳລັງຮ້ອງບົດເພງສັນລະເສີນນັ້ນເອງ, ມີຄື້ນໃຫຍ່ຖະຫຼົ່ມໃສ່ເຮືອ ເຮັດໃຫ້ໃບເຮືອຜືນໃຫຍ່ຂາດ ແລະ ມີນ້ຳໄຫຼທະລັກເຂົ້າໄປໃນທຸກຊັ້ນຂອງເຮືອ ເໝືອນມະຫາສະໝຸດໄດ້ກືນກິນພວກເຮົາໄປແລ້ວ. ພວກຊາວອັງກິດຮ້ອງໂຫວກເຫວກໂວຍວາຍ, ແຕ່ຊາວເຢຍລະມັນຮ້ອງເພງຕໍ່ ໂດຍບໍ່ມີອາການຢ້ານກົວແຕ່ຢ່າງໃດ. ຫຼັງຈາກນັ້ນ, ຂ້າພະເຈົ້າໄດ້ຖາມຄົນໜຶ່ງວ່າ, 'ເຈົ້າບໍ່ຢ້ານບໍ?' ລາວຕອບວ່າ, 'ຂ້ອຍຂອບຄຸນພຣະເຈົ້າທີ່ບໍ່ຮູ້ສຶກຢ້ານ.' ຂ້າພະເຈົ້າຈຶ່ງຖາມອີກວ່າ, 'ແລ້ວພວກຜູ້ຍິງ ແລະ ລູກບໍ່ຢ້ານບໍ?' ລາວຕອບຢ່າງສຸພາບວ່າ, 'ບໍ່, ພວກແມ່ຍິງ ແລະ ລູກຂອງເຮົາບໍ່ຢ້ານທີ່ຈະຕາຍ.'"[12] *{GC 255.1}*

ພໍໄປເຖິງເມືອງສະແວນນາ (Savannah), ເວສະລີກໍພັກຢູ່ກັບພວກຊາວໂມເຣເວຍໃນໄລຍະເວລາສັ້ນໆ ແລະ ຮູ້ສຶກປະທັບໃຈຫຼາຍກັບຊີວິດຄຣິສຕຽນຂອງພວກເຂົາ. ເພິ່ນຂຽນເຖິງການນະມັດສະການຂອງພວກເຂົາທີ່ແຕກຕ່າງຫຼາຍຈາກການນະມັດສະການທີ່ຂາດຊີວິດ ແລະ ເນັ້ນພິທີກຳຂອງຄຣິສຕະຈັກແຫ່ງອັງກິດວ່າ: "ຄວາມລຽບງ່າຍປະສົມກັບຄວາມຈິງໃຈເກືອບເຮັດໃຫ້ຂ້າພະເຈົ້າລືມ 1,700 ປີ ທີ່ຜ່ານມາ, ຈົນຂ້າພະເຈົ້າວາດພາບຕົວເອງກຳລັງຢູ່ໃນການປະຊຸມທີ່ບໍ່ເນັ້ນພິທີກຳ ແຕ່ມີອາຈານໂປໂລຜູ້ເປັນຊ່າງຫຍິບຜ້າເຕັນ ຫຼື ເປໂຕຜູ້ເປັນຊາວປະມົງກຳລັງນຳການນະມັດສະການ; ໃນຂະນະດຽວກັນ, ການນະມັດສະການຂອງຊາວໂມເຣເວຍນັ້ນ ສະແດງເຖິງພຣະວິນຍານ ແລະ ຣິດອຳນາດຂອງພຣະເຈົ້າ."[13] *{GC 255.2}*

ຈອນ ເວສະລີ ເຂົ້າໃຈເລື່ອງພຣະຄຸນ

ເມື່ອກັບໄປປະເທດອັງກິດ, ມີອາຈານຊາວໂມເຣເວຍສອນເວສະລີໃຫ້ເຂົ້າໃຈຄວາມເຊື່ອ ຕາມທີ່ຂຽນໄວ້ໃນພຣະຄຳພີຢ່າງແຈ່ມແຈ້ງຍິ່ງຂຶ້ນ. ເພິ່ນເຫັນວ່າ ຈະຕ້ອງປະຕິເສດການເພິ່ງພາການປະພຶດປະຕິບັດຂອງຕົນເອງເພື່ອຄວາມລອດ ແຕ່ຕ້ອງໄວ້ວາງໃຈຢ່າງໝົດສິ້ນໃນ "ລູກແກະຂອງພຣະເຈົ້າຜູ້ຊົງຮັບເອົາບາບກຳຂອງມະນຸດສະໂລກໄປເສຍ." (ໂຢຮັນ 1:29). ໃນການປະຊຸມສະໂມສອນຊາວໂມເຣເວຍທີ່ນະຄອນລອນດອນ ມີການອ່ານຂໍ້ຄວາມຂອງລູເທີ ທີ່ບັນລະຍາຍເຖິງການປ່ຽນແປງທີ່ເກີດຂຶ້ນເມື່ອພຣະວິນຍານຂອງພຣະເຈົ້າຊົງເຮັດວຽກຢູ່ໃນໃຈຂອງຜູ້ເຊື່ອ. ໃນຂະນະທີ່ເວສະລີນັ່ງຟັງຢູ່ນັ້ນ ມີຄວາມເຊື່ອບັງເກີດຂຶ້ນໃນໃຈ. ເພິ່ນກ່າວວ່າ: "ຂ້າພະເຈົ້າຮູ້ສຶກອົບອຸ່ນໃນໃຈຢ່າງແປກປະຫຼາດ ແລະ ຮູ້ສຶກ

[12] ຈອນ ໄວເຣດ, *ຊີວິດຂອງ ອາຈານ ຈອນ ເວສະລີ*, ເຫຼັ້ມ 2, ໜ້າ 10.

[13] *ອ້າງອີງຈາກທີ່ດຽວກັນ*, ໜ້າ 11, 12.

ວ່າ ຂ້າພະເຈົ້າໄດ້ໄວ້ວາງໃຈໃນພຣະຄຣິສແຕ່ຜູ້ດຽວ ເພື່ອຄວາມລອດຢ່າງແທ້ຈິງ, ແລ້ວພຣະເຈົ້າຊົງໃຫ້ຄວາມໝັ້ນໃຈແກ່ຂ້າພະເຈົ້າວ່າ ພຣະອົງໄດ້ຊົງຮັບຄວາມບາບຂອງ*ຂ້າພະເຈົ້າ*ໄປ ຄືຄວາມບາບຂອງ*ຂ້າພະເຈົ້ານີ້ເອງ* ແລະ ໄດ້ຊົງຊ່ວຍໃຫ້*ຂ້າພະເຈົ້າ*ລອດພົ້ນຈາກກົດແຫ່ງຄວາມບາບ ແລະ ຄວາມຕາຍ."[14] *{GC 255.3}*

ເອສະລີຍຶດໝັ້ນໃນຈຸດປະສົງດຽວຂອງເພິ່ນ ທີ່ຈະສະແຫວງຫາພຣະເຈົ້າຕະຫຼອດເວລາຫຼາຍປີ ດ້ວຍຄວາມພາກພຽນພະຍາຍາມໂດຍບໍ່ໄດ້ຮັບການປອບໃຈ; ໃນປີເຫຼົ່ານີ້ເພິ່ນໄດ້ປະຕິເສດຕົນເອງຢ່າງເຄັ່ງຄັດ, ເປັນທີ່ດູຖູກຂອງຄົນອື່ນ ແລະ ໄດ້ຮັບຄວາມອັບອາຍ. ບັດນີ້ເພິ່ນໄດ້ພົບພຣະອົງແລ້ວ ແລະ ໄດ້ພົບເຫັນວ່າ ພຣະຄຸນທີ່ເພິ່ນສະແຫວງຫາໂດຍການອະທິຖານ, ການອົດອາຫານ, ການໃຫ້ທານ ແລະ ການປະຕິເສດຕົນເອງ, ແທ້ຈິງແລ້ວກໍເປັນຂອງປະທານ "ໂດຍບໍ່ຕ້ອງເສຍຄ່າຫຍັງໝົດ." (ເອຊາຢາ 55:1). *{GC 256.1}*

ເມື່ອເພິ່ນເຊື່ອວາງໃຈໃນພຣະຄຣິສແລ້ວ, ເພິ່ນຮູ້ສຶກວ່າມີຄວາມປາຖະໜາເຕັມລົ້ນຫົວໃຈ ທີ່ຈະປະກາດໃຫ້ຄົນໃນທຸກແຫ່ງຫົນ ຮູ້ຂ່າວປະເສີດອັນຮຸ່ງເຮືອງແຫ່ງພຣະຄຸນຂອງພຣະເຈົ້າ ທີ່ພຣະອົງປະທານໂດຍບໍ່ຄິດມູນຄ່າ. ເພິ່ນກ່າວວ່າ: "ຂ້າພະເຈົ້າຖືວ່າ ຂອບເຂດພື້ນທີ່ປະກາດຂອງຂ້າພະເຈົ້າແມ່ນໂລກທັງໂລກ; ສະນັ້ນ, ສ່ວນໃດຂອງໂລກທີ່ຂ້າພະເຈົ້າຢູ່ ຂ້າພະເຈົ້າຖືວ່າ ມີໜ້າທີ່ຜູກມັດຂ້າພະເຈົ້າຢູ່ ໃຫ້ປະກາດແກ່ທຸກຄົນທີ່ຈະຍອມຟັງ ເຖິງຂ່າວອັນໜ້າຍິນດີເລື່ອງຄວາມລອດພົ້ນ."[15] *{GC 256.2}*

ບັດນີ້ເພິ່ນຍັງຮັກສາວິຖີຊີວິດທີ່ເຄັ່ງຄັດ ແລະ ຍັງປະຕິເສດຕົນເອງຕໍ່ໄປ, ບໍ່ແມ່ນເພື່ອເປັນ*ພື້ນ-ຖານ*ແຫ່ງຄວາມເຊື່ອ ແຕ່ເປັນ*ຜົນ*ທີ່ເກີດຂຶ້ນມາຍ້ອນຄວາມເຊື່ອ; ມັນບໍ່ແມ່ນ*ຮາກຖານ*ແຫ່ງຄວາມບໍຣິສຸດ ແຕ່ເປັນ*ຜົນ*ຂອງຄວາມບໍຣິສຸດຕ່າງຫາກ. ພຣະຄຸນຂອງພຣະເຈົ້າໃນພຣະເຢຊູຄຣິສ ແມ່ນຮາກຖານແຫ່ງຄວາມຫວັງຂອງຄຣິສຕຽນ ແລະ ພຣະຄຸນນັ້ນຈະໄດ້ຮັບການສະແດງອອກດ້ວຍການເຊື່ອຟັງ. ເອສະລີໄດ້ອຸທິດຕົນຕໍ່ການປະກາດຄວາມຈິງອັນຍິ່ງໃຫຍ່ທີ່ເພິ່ນໄດ້ຮັບ, ຄືເລື່ອງຄວາມຊອບທຳໂດຍທາງຄວາມເຊື່ອໃນພຣະໂລຫິດຂອງພຣະຄຣິສທີ່ໄຖ່ມະນຸດໃຫ້ກັບຄືນດີກັບພຣະເຈົ້າ ແລະ ເລື່ອງຣິດອຳນາດຂອງພຣະວິນຍານບໍຣິສຸດທີ່ຟື້ນຟູຈິດໃຈ ແລະ ໃຫ້ເກີດໝາກຜົນໃນຊີວິດຕາມແບບຢ່າງຂອງພຣະຄຣິສ. *{GC 256.3}*

ທ່ານ ວິດຟຽວ ແລະ ສອງອ້າຍນ້ອງເອສະລີ ໄດ້ສຳນຶກຢ່າງເລິກເຊິ່ງເປັນເວລາດົນນານເຖິງສະພາບຂອງຕົນທີ່ຕ້ອງພິນາດ ເຊິ່ງເປັນສິ່ງທີ່ຊ່ວຍພວກເຂົາໃຫ້ມີຄວາມພ້ອມສຳລັບວຽກງານຂອງຕົນ. ນອກຈາກນັ້ນ, ພວກເຂົາຕ້ອງທົນຕໍ່ການຖືກດູຖູກເຍາะເຍີ້ຍ ແລະ ການຖືກກົດຂີ່ຂົ່ມເຫັງ ທັງໃນມະຫາວິທະຍາໄລ ແລະ ໃນຂະນະທີ່ເຂົ້າສູ່ວຽກງານການຮັບໃຊ້; ທັງໝົດນີ້ໄດ້ຝຶກໃຫ້ພວກເຂົາມີຄວາມອົດທົນຢ່າງທະຫານທີ່ດີຂອງພຣະຄຣິສ. ສະໄໝຢູ່ມະຫາວິທະຍາໄລ ພວກເຂົາ ແລະ ຄົນອີກຈຳນວນໜຶ່ງທີ່ເຫັນດີນຳກໍຖືກເພື່ອນນັກສຶກສາບາງຄົນທີ່ບໍ່ຈິງໃຈກັບສາສະໜາ ເອີ້ນພວກເຂົາຢ່າງດູຖູກວ່າເປັນພວກເມທໍດິສ ໝາຍເຖິງ "ພວກບ້າລະບຽບວິໄນ," ແຕ່ໃນປັດຈຸບັນຄຳນີ້ເປັນຄຳທີ່ມີກຽດ ແລະ ກາຍເປັນຊື່ຄະນະນິກາຍທີ່ຕິດອັນດັບໃຫຍ່ທີ່ສຸດໃນປະເທດອັງກິດ ແລະ ອາເມຣິກາ. *{GC 256.4}*

ໃນຖານະທີ່ອາຈານວິດຟຽວ ແລະ ສອງອ້າຍນ້ອງເອສະລີເປັນສະມາຊິກຄຣິສຕະຈັກແຫ່ງອັງກິດ, ພວກເຂົາຕິດຢູ່ກັບຮູບແບບການນະມັດສະການຂອງຄຣິສຕະຈັກນັ້ນຢ່າງໜຽວແໜ້ນ; ແຕ່ພຣະເຈົ້າຊົງສຳແດງໃຫ້ພວກເຂົາເຫັນມາດຕະຖານທີ່ສູງກວ່ານັ້ນໃນພຣະຄຳຂອງພຣະອົງ. ພຣະວິນຍານບໍຣິສຸດຊົງ

[14] *ອ້າງອີງຈາກທີ່ດຽວກັນ*, ໜ້າ 52.
[15] *ອ້າງອີງຈາກທີ່ດຽວກັນ*, ໜ້າ 74.

ເລັ່ງເລົ້າໃຫ້ພວກເຂົາປະກາດພຣະຄຣິສ ແລະ ການທີ່ພຣະອົງຖືກຄຶງໄວ້ເທິງໄມ້ກາງແຂນ. ຣິດອຳນາດ ຂອງພຣະເຈົ້າສູງສຸດຢູ່ກັບວຽກງານປະກາດຂອງພວກເຂົາ, ມີຫຼາຍພັນຄົນສຳນຶກໃນຄວາມບາບ ແລະ ກັບໃຈຢ່າງແທ້ຈິງ. ຈຳເປັນທີ່ລູກແກະເຫຼົ່ານີ້ຈະໄດ້ຮັບການປົກປ້ອງຈາກພວກໝາປ່າທີ່ຈ້ອງຈະກັດກິນ. ເວສະລີບໍ່ໄດ້ຄິດທີ່ຈະຕັ້ງຄະນະນິກາຍໃໝ່, ແຕ່ເພິ່ນໄດ້ຈັດຕັ້ງກຸ່ມຜູ້ເຊື່ອພາຍໃຕ້ຊື່ວ່າ ເຄືອຂ່າຍກຸ່ມ ເມທໍດິສ (Methodist Connection). *{GC 257.1}*

ຄົນຈາກຄຣິສຕະຈັກທີ່ລັດຖະບານຮັບຮອງ ພັດຕໍ່ຕ້ານພວກເຂົາຢ່າງໜັກໜ່ວງ ແລະ ໜ້າແປກໃຈ; ເຖິງຢ່າງໃດກໍຕາມ, ພຣະເຈົ້າຊົງນຳດ້ວຍພຣະປັນຍາຂອງພຣະອົງ ເພື່ອໃຫ້ການປະຕິຮູບເລີ່ມຂຶ້ນພາຍໃນຄຣິສຕະຈັກເອງ. ຖ້າການປະຕິຮູບໄດ້ເກີດຂຶ້ນຈາກພາຍນອກຢ່າງດຽວ ມັນຄົງບໍ່ສາມາດເຂົ້າໄປເຖິງບ່ອນທີ່ຕ້ອງການຫຼາຍທີ່ສຸດ. ແຕ່ເນື່ອງຈາກຜູ້ປະກາດການປະຕິຮູບນັ້ນເປັນອາຈານຂອງ ຄຣິສຕະຈັກເອງ ແລະ ເຮັດວຽກພາຍໃຕ້ລະບຽບຂອງຄຣິສຕະຈັກຕາມຈັງຫວະ ແລະ ໂອກາດທີ່ຫາໄດ້, ສະນັ້ນຈຶ່ງມີການເປີດປະຕູຮັບເອົາຄວາມຈິງ ເຊິ່ງຖ້າໃຊ້ວິທີອື່ນກໍຄົງບໍ່ມີໂອກາດ. ອາຈານປະຈຳໂບດ ບາງຄົນໄດ້ຕື່ນຈາກຄວາມເຊື່ອຍຊາດ້ານສິນທຳ ແລະ ກາຍເປັນນັກເທດທີ່ກະຕືລືລົ້ນໃນຄຣິສຕະຈັກ ທ້ອງຖິ່ນຂອງຕົນເອງ. ຄຣິສຕະຈັກເຊິ່ງຢູ່ໃນສະພາບເໝືອນຄົນຕາຍຍ້ອນເນັ້ນພິທີກຳ ໄດ້ກັບຄືນມີຊີວິດ. *{GC 257.2}*

ໃນສະໄໝຂອງເວສະລີເໝືອນກັບທຸກສະໄໝຂອງປະຫວັດສາດຄຣິສຕະຈັກ ຄືຄົນທີ່ມີຂອງປະທານ ແຕກຕ່າງກັນໄດ້ເຮັດວຽກຕາມທີ່ໄດ້ຮັບມອບໝາຍ. ພວກເຂົາບໍ່ໄດ້ສອດຄ່ອງກັນໃນລາຍລະອຽດຂອງ ຫຼັກຂໍ້ເຊື່ອທຸກຢ່າງ, ແຕ່ພຣະວິນຍານຂອງພຣະເຈົ້າຊົງດົນໃຈພວກເຂົາທຸກຄົນ; ພວກເຂົາຈຶ່ງຮ່ວມກັນ ເປັນໜຶ່ງດຽວ ດ້ວຍຄວາມມຸ່ງໝັ້ນທີ່ຈະນຳຄົນມາຫາພຣະຄຣິສ. ຄັ້ງໜຶ່ງຄວາມເຂົ້າໃຈທີ່ແຕກຕ່າງກັນ ລະຫວ່າງ ທ່ານ ວິດຟຽວ ກັບສອງອ້າຍນ້ອງເວສະລີ ເກືອບເປັນເຫດໃຫ້ພວກເຂົາແຕກຫັກ; ແຕ່ ເມື່ອໄດ້ຮຽນຮູ້ເຖິງຄວາມອ່ອນສຸພາບ ຜ່ານປະສົບການທີ່ພວກເຂົາມີກັບພຣະຄຣິສ ພວກເຂົາກໍສາມາດ ຄືນດີກັນໄດ້ດ້ວຍຄວາມຮັກ ແລະ ການເປີດໃຈອົດທົນຕໍ່ກັນ. ໃນຂະນະທີ່ຄົນບາບກຳລັງພິນາດ, ຄວາມເທັດ ແລະ ຄວາມຊົ່ວຮ້າຍກຳລັງເກີດຂຶ້ນຢູ່ທຸກແຫ່ງຫົນ, ພວກເຂົາຈຶ່ງບໍ່ມີເວລາທີ່ຈະໂຕ້ຖຽງ ກັນ. *{GC 257.3}*

ຈອນ ເວສະລີ ຫວິດຕາຍ

ຜູ້ຮັບໃຊ້ຂອງພຣະເຈົ້າຕ້ອງດຳເນີນຕາມເສັ້ນທາງທີ່ລຳບາກ. ຄົນມີອິດທິພົນ ແລະ ການສຶກສາ ໄດ້ໃຊ້ກຳລັງຄວາມສາມາດເພື່ອຕໍ່ຕ້ານພວກເຂົາ. ເມື່ອເວລາຜ່ານໄປໄລຍະໜຶ່ງ ກໍມີສາສະໜາຈານ ຫຼາຍຄົນສະແດງຄວາມຕັ້ງໃຈໃນການຕໍ່ຕ້ານ ແລະ ປິດປະຕູໂບດຂອງພວກເຂົາຕໍ່ຄວາມເຊື່ອອັນ ບໍຣິສຸດ ແລະ ຜູ້ທີ່ປະກາດຄວາມເຊື່ອນັ້ນ. ການທີ່ພວກສາສະໜາຈານຢືນໃນທຳມາດ ແລະ ປະນາມ ເວສະລີພ້ອມເພື່ອນຮ່ວມປະກາດນັ້ນ ໄດ້ຍຸຍົງຄົນໂງ່ຈ້າ ແລະ ຄົນຊົ່ວທີ່ຢູ່ຝ່າຍຄວາມມືດໃຫ້ລຸກຮື້ ຂຶ້ນ. ຈອນ ເວສະລີ ຫວິດຕາຍຢູ່ຫຼາຍເທື່ອໂດຍພຣະເມດຕາຂອງພຣະເຈົ້າ. ເມື່ອຝູງຊົນຖືກຍຸຍົງໃຫ້ ໂກດຮ້າຍໃສ່ເພິ່ນ ແລະ ເບິ່ງຄືວ່າບໍ່ມີທາງໜີໄປໄດ້, ຈະມີທູດສະຫວັນມາໃນຮູບຮ່າງຂອງມະນຸດມາຢູ່ ຂ້າງເພິ່ນ, ຝູງຊົນຈະຖອຍກັບ ແລະ ຜູ້ຮັບໃຊ້ຂອງພຣະຄຣິສຈະຜ່ານພົ້ນອັນຕະລາຍໄປດ້ວຍຄວາມ ປອດໄພ. *{GC 258.1}*

ຄັ້ງໜຶ່ງຫຼັງຈາກທີ່ລອດຝູງຊົນທີ່ໂມໂຫຮ້າຍໄປໄດ້, ເວສະລີກ່າວວ່າ: “ຂະນະທີ່ພວກເຮົາກຳລັງຍ່າງ ລົງຄ້ອຍໄປຫາເມືອງຕາມທາງເດີນທີ່ມືນ ມີຫຼາຍຄົນພະຍາຍາມຍູ້ໃຫ້ຂ້າພະເຈົ້າລົ້ມລົງ ໂດຍພວກເຂົາ ຄິດວ່າ ຖ້າຂ້າພະເຈົ້າລົ້ມລົງແລ້ວ ຈະບໍ່ໃຫ້ມີໂອກາດລຸກຂຶ້ນອີກ. ແຕ່ຂ້າພະເຈົ້າບໍ່ໄດ້ສະດຸດ ຫຼື ມືນ

ໄຫຼເລີຍ ຈົນໃນທີ່ສຸດກໍພົ້ນມືພວກເຂົາໄປ.... ເຖິງແມ່ນວ່າຫຼາຍຄົນຈະຈັບຄໍເສື້ອ ຫຼື ເສື້ອຜ້າຂອງ ຂ້າພະເຈົ້າ ເພື່ອດຶງຂ້າພະເຈົ້າລົງ ແຕ່ພວກເຂົາບໍ່ສາມາດຍຶດຂ້າພະເຈົ້າໄວ້ໄດ້ເລີຍ, ມີພຽງຄົນດຽວ ເທົ່ານັ້ນທີ່ສາມາດຈັບກະເປົ໋າເສື້ອຂອງຂ້າພະເຈົ້າໄວ້, ແຕ່ມັນຈີກຢູ່ໃນມືຂອງລາວ; ສ່ວນກະເປົ໋າອີກຂ້າງ ໜຶ່ງກໍຖືກຈີກແຕ່ເຄິ່ງດຽວ ໂດຍທີ່ເງິນຍັງເຫຼືອໄວ້ໃນກະເປົ໋າ.... ຊາຍແຂງແຮງຄົນໜຶ່ງຖືໄມ້ໂອກທ່ອນ ໃຫຍ່ຢູ່ຂ້າງຫຼັງ ໄດ້ຟາດມາທາງຂ້າພະເຈົ້າຫຼາຍເທື່ອແຕ່ບໍ່ຖືກ ເພາະຖ້າຫາກລາວຟາດຖືກຫົວດ້ານຫຼັງ ຂອງຂ້າພະເຈົ້າແລ້ວ ລາວກໍຄົງບໍ່ຕ້ອງຟາດອີກ! ຂ້າພະເຈົ້າຄົງຕາຍແນ່ນອນ. ແຕ່ທຸກເທື່ອທີ່ລາວຟາດ ມາ ໄມ້ທ່ອນນັ້ນກໍຖືກປັດໄປຕົກຂ້າງ ຂ້າພະເຈົ້າບໍ່ຮູ້ວ່າມີຫຍັງປັດມັນໄປ ເພາະຂ້າພະເຈົ້າບໍ່ສາມາດ ຫຼົບໄປທາງຊ້າຍ ຫຼື ທາງຂວາໄດ້ເລີຍ.... ມີອີກຄົນໜຶ່ງແລ່ນຜ່ານຝູງຊົນເຂົ້າມາຫາຂ້າພະເຈົ້າ, ລາວ ຍົກແຂນຂຶ້ນເພື່ອຈະຕີ ແຕ່ທັນໃດນັ້ນກໍປ່ອຍມືລົງລູບຫົວຂ້າພະເຈົ້າພ້ອມກ່າວວ່າ: ‘ເບິ່ງດູ! ເສັ້ນຜົມ ຂອງລາວນຸ້ມແທ້!’... ຄົນກຸ່ມທຳອິດທີ່ກັບໃຈຄືພວກຫົວໜ້ານັກເລງຫົວໄມ້ໃນເມືອງ, ເປັນຜູ້ນຳພວກຄົນ ຮ້າຍ ເຊິ່ງໜຶ່ງໃນນັ້ນເຄີຍເປັນນັກມວຍໃນລະຄອນສັດ....” *{GC 258.2}*

“ເບິ່ງແມ! ພຣະເຈົ້າຊົງກຽມເຮົາເທື່ອລະໜ້ອຍ ເພື່ອໃຫ້ພ້ອມສຳລັບນ້ຳພຣະໄທຂອງພຣະອົງ. ສອງ ປີກ່ອນ, ມີດິນຈີ່ກ້ອນໜຶ່ງລອຍມາສຽດໄຫຼ່ຂອງຂ້າພະເຈົ້າ. ຕໍ່ມາປີໜຶ່ງ ມີຄົນດຶກກ້ອນຫີນມາຖືກ ໜ້າຜາກຂອງຂ້າພະເຈົ້າຢູ່ລະຫວ່າງຕາພໍດີເລີຍ. ເດືອນແລ້ວນີ້ຂ້າພະເຈົ້າຖືກຕີເທື່ອໜຶ່ງ ແລະ ຄ່ຳຄືນ ນີ້ກໍຖືກຕີສອງເທື່ອ, ເທື່ອໜຶ່ງກ່ອນພວກເຮົາເຂົ້າມາໃນເມືອງ ແລະ ອີກເທື່ອໜຶ່ງເມື່ອອອກໄປ; ແຕ່ ທັງສອງເທື່ອບໍ່ເຈັບຫຍັງເລີຍ ເພາະເຖິງວ່າຜູ້ຊາຍຄົນໜຶ່ງຕີໜ້າເອິກຂ້າພະເຈົ້າ ດ້ວຍສຸດກຳລັງຂອງ ລາວ ແລະ ອີກຄົນໜຶ່ງຕີປາກຂອງຂ້າພະເຈົ້າແຮງ ຈົນເລືອດໄຫຼອອກມາທັນທີ, ແຕ່ຂ້າພະເຈົ້າບໍ່ຮູ້ສຶກ ເຈັບເລີຍ, ບໍ່ຕ່າງຫຍັງກັບການຖືກລູບດ້ວຍເສັ້ນເຟືອງ.”[16] *{GC 259.1}*

ພວກຊາວເມທໍດິສໃນສະໄໝນັ້ນ, ທັງຜູ້ເຊື່ອທົ່ວໄປ ແລະ ກຸ່ມນັກເທດ, ລ້ວນແຕ່ຕ້ອງທົນຕໍ່ການ ຖືກເຍາะເຍີ້ຍ ແລະ ການກົດຂີ່ຂົ່ມເຫັງ, ທັງຈາກສະມາຊິກຄຣິສຕະຈັກແຫ່ງອັງກິດ ແລະ ຈາກ ຄົນທີ່ບໍ່ນັບຖືສາສະໜາຢ່າງເປີດເຜີຍ ແຕ່ຫຼັງການປ້າຍສີຂອງສະມາຊິກຄຣິສຕະຈັກ. ພວກເຂົາຖືກ ຟ້ອງຂຶ້ນສານຍຸຕິທຳ, ເຊິ່ງໃນສະໄໝນັ້ນພວກສານດັ່ງກ່າວມີຄວາມຍຸຕິທຳແຕ່ຊື່ເທົ່ານັ້ນ ເພາะມີ ໜ້ອຍຄັ້ງທີ່ມີຄວາມຍຸຕິທຳຢ່າງແທ້ຈິງ. ຫຼາຍຄັ້ງກໍຖືກຜູ້ຂົ່ມເຫັງລົງມືທຳຮ້າຍຈົນບາດເຈັບ. ມີກຸ່ມຄົນ ຮ້າຍໄປຕາມເຮືອນ ທຳລາຍເຄື່ອງເຟີນີເຈີ ແລະ ເຄື່ອງຂອງ, ທັງປຸ້ນເອົາສິ່ງໃດກໍຕາມທີ່ພວກເຂົາ ຕ້ອງການ ແລ້ວກໍທຳຮ້າຍທັງຜູ້ຊາຍ, ແມ່ຍິງ ແລະ ເດັກນ້ອຍຢ່າງບໍ່ປານີ. ໃນບາງຄັ້ງມີການຕິດ ປະກາດໃນທີ່ສາທາລະນະ ຮຽກຮ້ອງໃຫ້ຜູ້ທີ່ຢາກຊ່ວຍໃນການທຳລາຍປ່ອງຢ້ຽມ ແລະ ປຸ້ນເຮືອນຂອງ ຊາວເມທໍດິສ ໃຫ້ມາຮວມຕົວກັນຕາມເວລາ ແລະ ສະຖານທີ່ທີ່ກຳນົດ. ການລ່ວງລະເມີດກົດໝາຍ ບ້ານເມືອງ ແລະ ກົດບັນຍັດຂອງພຣະເຈົ້າຢ່າງເປີດເຜີຍເຊັ່ນນີ້ເກີດຂຶ້ນ ໂດຍເຈົ້າໜ້າທີ່ບໍ່ໄດ້ກ່າວ ຕັກເຕືອນແຕ່ຢ່າງໃດ. ມີການຂົ່ມເຫັງຊາວເມທໍດິສຢ່າງເປັນລະບົບ, ເຖິງແມ່ນວ່າ ພວກເຂົາມີຄວາມ ຜິດພຽງຢ່າງດຽວໃນສາຍຕາຂອງກຸ່ມຄົນທີ່ຕໍ່ຕ້ານ ຄືການຫາທາງຊ່ວຍຫັນຄົນບາບຈາກເສັ້ນທາງແຫ່ງ ຄວາມພິນາດ ມາສູ່ເສັ້ນທາງແຫ່ງຄວາມບໍຣິສຸດ. *{GC 259.2}*

ຈອນ ເວສະລີ ກ່າວເຖິງປະເດັນທີ່ຕົນ ແລະ ເພື່ອນຮ່ວມງານຖືກກ່າວຫາ ໂດຍກ່າວວ່າ: “ບາງຄົນອ້າງວ່າຄຳສອນຂອງຄົນເຫຼົ່ານີ້ເປັນຄຳສອນທຽມເທັດ, ຜິດພ້ຽນ ແລະ ເນັ້ນຄວາມຮູ້ສຶກຫຼາຍ ກວ່າເຫດຜົນ; ທັງອ້າງວ່າເປັນຄຳສອນໃໝ່ທີ່ຫາກໍໄດ້ຍິນ, ເປັນຄຳສອນຂອງພວກຄະນະຄະເວເກີ (Quakerism), ພວກຄັ່ງສາສະໜາ ແລະ ພວກນິຍົມລະບອບສັນຕະປາປາ. ແຕ່ຂໍ້ອ້າງເຫຼົ່ານີ້ໄດ້ຖືກ

[16] *ງານຂຽນຂອງ ຈອນ ເວສະລີ* (John Wesley), ເຫຼັ້ມ 3, ໜ້າ 297, 298.

ຖອນຮາກຖອນໂຄນໄປແລ້ວ, ເພາະມີການພິສູດແລ້ວວ່າ ຄຳສອນຂອງພວກເຮົາໃນທຸກເລື່ອງ ເປັນ ຄຳສອນທີ່ແຈ່ມແຈ້ງຈາກພຣະຄຳພີ ຕາມທີ່ຄຣິສຕະຈັກແຫ່ງອັງກິດຂອງພວກເຮົາເອງໄດ້ຕີຄວາມ. ເພາະສະນັ້ນ, ມັນຈຶ່ງບໍ່ສາມາດເປັນຄຳສອນທຽມເທັດ ຫຼື ຜິດພ້ຽນໄດ້ ຖ້າແມ່ນພຣະຄຳພີເປັນຄວາມ ຈິງ.” “ບາງຄົນອ້າງວ່າ, ‘ຄຳສອນຂອງພວກເຂົາເຄັ່ງຄັດເກີນໄປ; ພວກເຂົາເຮັດໃຫ້ທາງໄປສະຫວັນແຄບ ເກີນໄປ.’ ຄວາມຈິງແລ້ວ, ນີ້ແມ່ນຂໍ້ຄັດຄ້ານຂໍ້ທຳອິດ ເຊິ່ງເກືອບຈະເປັນຂໍ້ກ່າວຫາຂໍ້ດຽວໃນໄລຍະເວລາ ດົນພໍສົມຄວນ ແລະ ເປັນເບື້ອງຫຼັງຂອງຂໍ້ຄັດຄ້ານນັບອີກພັນຂໍ້ເຊິ່ງປາກົດຢູ່ໃນຮູບແບບຕ່າງໆ. ແຕ່ ວ່າຄຳສອນຂອງຊາວເມທໍດິສ ເຮັດໃຫ້ທາງໄປສະຫວັນແຄບກວ່າທີ່ອົງພຣະຜູ້ເປັນເຈົ້າ ແລະ ພວກ ອັກຄະສາວົກຂອງພຣະອົງໄດ້ເຮັດບໍ? ຄຳສອນຂອງພວກເຂົາເຄັ່ງຄັດກວ່າຄຳສອນຂອງພຣະຄຳພີບໍ? ຂໍ ໃຫ້ພິຈາລະນາຂໍ້ພຣະຄຳພີທີ່ແຈ່ມແຈ້ງພຽງສອງສາມຂໍ້: ‘ຈົ່ງຮັກອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ ດ້ວຍສຸດໃຈ, ດ້ວຍສຸດຈິດ, ດ້ວຍສຸດຄວາມຄິດ ແລະ ດ້ວຍສຸດກຳລັງຂອງເຈົ້າ.’ ‘ຖ້ອຍຄຳເປົ່າໆ ທຸກຄຳ ທີ່ມະນຸດເວົ້າ ຈະຕ້ອງໃຫ້ການເພາະຄຳນັ້ນໃນວັນພິພາກສາ.’ ‘ເມື່ອເຈົ້າທັງຫຼາຍຈະກິນ ຈະດື່ມ ຫຼື ຈະ ເຮັດສິ່ງໃດກໍດີ ຈົ່ງເຮັດທຸກສິ່ງເພື່ອຖວາຍພຣະກຽດແດ່ພຣະເຈົ້າ.’” (ມາຣະໂກ 12:30; ມັດທາຍ 12:36; 1 ໂກຣິນໂທ 10:31). *{GC 259.3}*

“ຖ້າຄຳສອນຂອງພວກເຂົາເຄັ່ງຄັດກວ່ານີ້ ເຂົາກໍຕ້ອງຮັບຜິດຊອບ; ແຕ່ພວກທ່ານຮູ້ຢູ່ແກ່ໃຈ ວ່າ ມັນບໍ່ແມ່ນ. ແລ້ວມີໃຜແດ່ທີ່ສາມາດສອນໃຫ້ເຄັ່ງຄັດໜ້ອຍກວ່ານີ້ໄດ້ ໂດຍບໍ່ໄດ້ເຮັດໃຫ້ພຣະຄຳ ຂອງພຣະເຈົ້າເສື່ອມລົງ? ຜູ້ທີ່ຮັບຜິດຊອບຄວາມເລີກລັບແຫ່ງພຣະເຈົ້າ ຈະສັດຊື່ໄດ້ຢ່າງໃດຕໍ່ພຣະຄຳ ອັນສັກສິດທີ່ມອບໝາຍໃຫ້ ຖ້າຫາກວ່າລາວໄດ້ປ່ຽນແປງພຣະຄຳນັ້ນ? ບໍ່ໄດ້ເລີຍ, ລາວບໍ່ສາມາດ ຫຼຸດນ້ຳໜັກຂອງຂໍ້ໜຶ່ງຂໍ້ໃດໄດ້, ແຕ່ຕ້ອງປະກາດໃຫ້ມະນຸດທຸກຄົນຮູ້ວ່າ ‘ຂ້າພະເຈົ້າບໍ່ສາມາດຫຼຸດ ນ້ຳໜັກຂອງພຣະຄຳພີລົງມາໃຫ້ເປັນໄປຕາມຄ່ານິຍົມຂອງເຈົ້າໄດ້. ເຈົ້າຕ້ອງປັບຊີວິດໃຫ້ເປັນໄປຕາມ ພຣະຄຳພີ ຫຼື ພິນາດໄປຕະຫຼອດການ.’ ເພາະເຫດນີ້ແຫຼະ ຄົນທັງຫຼາຍຈຶ່ງພາກັນຮ້ອງວ່າ, ‘ອາຈານ ເຫຼົ່ານີ້ບໍ່ມີຄວາມເມດຕາເລີຍ.’ ເຈົ້າວ່າບໍ່ເມດຕາບໍ? ບໍ່ເມດຕາເລື່ອງໃດ? ພວກເຂົາບໍ່ແມ່ນໄດ້ລ້ຽງ ຄົນອຶດຫິວ ແລະ ເອົາເສື້ອຜ້າໃຫ້ຜູ້ທີ່ເປືອຍກາຍໄດ້ນຸ່ງຫົ່ມບໍ່ແມ່ນບໍ? ແຕ່ຄົນເຫຼົ່ານີ້ຕອບວ່າ ‘ບໍ່ ແມ່ນເລື່ອງນັ້ນດອກ, ອາຈານເຫຼົ່ານັ້ນບໍ່ໄດ້ຂາດໃນເລື່ອງຄວາມຊ່ວຍເຫຼືອ, ແຕ່ບໍ່ມີຄວາມເມດຕາໃນ ເລື່ອງການຕັດສິນ! ພວກເຂົາຄິດວ່າ ບໍ່ມີຜູ້ໃດຈະລອດໄດ້ ນອກຈາກຄົນທີ່ເຊື່ອຖືແບບດຽວກັນກັບ ພວກເຂົາ.’”[17] *{GC 260.1}*

ຄວາມເສື່ອມຖອຍທາງດ້ານຈິດວິນຍານ ເຊິ່ງເກີດຂຶ້ນໃນປະເທດອັງກິດກ່ອນສະໄໝຂອງເອສະລິ ເລັກໜ້ອຍ ສ່ວນຫຼາຍເກີດຈາກຄຳສອນທີ່ວ່າ ພຣະບັນຍັດຂອງພຣະເຈົ້າຖືກລົ້ມເລີກແລ້ວ. ມີຫຼາຍຄົນ ຢືນຢັນວ່າ ພຣະຄຣິສຊົງຍົກເລີກກົດສິນທຳ; ສະນັ້ນ, ຄຣິສຕຽນຈຶ່ງບໍ່ຕ້ອງຮັກສາພຣະບັນຍັດ ເພາະ ຜູ້ເຊື່ອໄດ້ຮັບການປົດປ່ອຍຈາກ “ການເປັນທາດແຫ່ງການປະພຶດດີ.” ສ່ວນຄົນອື່ນ ເຖິງແມ່ນຈະ ຍອມຮັບວ່າພຣະບັນຍັດດຳລົງຢູ່ຕະຫຼອດໄປ, ແຕ່ໃນຂະນະດຽວກັນກໍພັດປະກາດວ່າ ບໍ່ຈຳເປັນໃຫ້ ສາສະໜາຈານສອນສະມາຊິກໃຫ້ຮັກສາພຣະບັນຍັດ ເພາະຜູ້ທີ່ພຣະເຈົ້າຊົງເລືອກໃຫ້ຮັບຄວາມລອດ ນັ້ນ, “ຈະຖືກພະລັງແຫ່ງພຣະຄຸນກະຕຸ້ນພວກເຂົາໃຫ້ເຮັດຄວາມດີຢ່າງຫຼີກລ່ຽງບໍ່ໄດ້,” ໃນຂະນະທີ່ ຜູ້ທີ່ຖືກກຳນົດໃຫ້ພິນາດໄປຕະຫຼອດນິຣັນກໍ “ບໍ່ມີກຳລັງທີ່ຈະຮັກສາພຣະບັນຍັດຂອງພຣະເຈົ້າໄດ້ ເລີຍ.” *{GC 260.2}*

[17] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 3, ໜ້າ 152, 153.

ບາງຄົນຖືວ່າ “ຜູ້ທີ່ຖືກເລືອກໃຫ້ຮັບຄວາມລອດພົ້ນນັ້ນ ບໍ່ສາມາດຫຼຸດໄປຈາກພຣະຄຸນ ຫຼື ສູນເສຍ ການເປັນທີ່ໂປດປານຂອງພຣະເຈົ້າໄດ້.” ຄົນເຫຼົ່ານີ້ຍັງໄດ້ສານຕໍ່ເຖິງຂໍ້ສະຫຼຸບທີ່ໜ້າລັງກຽດກວ່ານັ້ນ ອີກວ່າ: “ການກະທຳຊົ່ວຂອງຄົນທີ່ຖືກເລືອກນັ້ນ ບໍ່ໄດ້ເປັນຄວາມບາບແທ້ ແລະ ບໍ່ຄວນຖືກນັບວ່າ ເປັນການລະເມີດພຣະບັນຍັດຂອງພຣະເຈົ້າ; ສະນັ້ນ, ພວກເຂົາຈຶ່ງບໍ່ຕ້ອງສາລະພາບບາບ ຫຼື ກັບໃຈ ປະຖິ້ມການເຮັດຊົ່ວດັ່ງກ່າວ.”[18] ດັ່ງນັ້ນ, ພວກເຂົາຈຶ່ງປະກາດວ່າ ແມ່ນແຕ່ຄວາມບາບທີ່ໂຫດຮ້າຍ ທີ່ສຸດ, “ທີ່ຄົນທົ່ວໄປເຫັນວ່າເປັນການລະເມີດກົດບັນຍັດຂອງພຣະເຈົ້າຢ່າງຮ້າຍແຮງ ກໍຍັງບໍ່ໄດ້ເປັນ ບາບໃນສາຍພຣະເນດຂອງພຣະເຈົ້າ” ຖ້າຫາກວ່າຜູ້ກະທຳບາບນັ້ນ ເປັນໜຶ່ງໃນຜູ້ທີ່ພຣະເຈົ້າຊົງເລືອກ ໄວ້. “ຍ້ອນວ່າ ໜຶ່ງໃນລັກສະນະສະເພາະຂອງຜູ້ທີ່ຖືກເລືອກກໍຄື ພວກເຂົາບໍ່ສາມາດເຮັດສິ່ງໃດທີ່ ພຣະເຈົ້າບໍ່ພໍພຣະໄທ ຫຼື ທີ່ພຣະບັນຍັດຫ້າມໄວ້ໄດ້ເລີຍ.” {GC 261.1}

ຄຳສອນຂອງຜີສາດມານຮ້າຍເຫຼົ່ານີ້ ມີແກ່ນສານແບບດຽວກັນກັບຄຳສອນຊ່ວງຫຼັງ ທີ່ນັກສາສະໜາ-ສາດ ແລະ ຜູ້ສອນທີ່ຍອດນິຍົມກ່າວວ່າ ມາດຕະຖານຄວາມຖືກຕ້ອງ ບໍ່ແມ່ນພຣະບັນຍັດອັນ ປ່ຽນແປງບໍ່ໄດ້ຂອງພຣະເຈົ້າ ແຕ່ເປັນສັງຄົມຕ່າງຫາກທີ່ກຳນົດຂຶ້ນ ຈຶ່ງສາມາດປ່ຽນແປງໄດ້ຕະຫຼອດ ເວລາ. ຄວາມຄິດທັງໝົດນີ້ໄດ້ຮັບການດົນໃຈຈາກວິນຍານດຽວກັນ ກໍຄືຊາຕານ ຜູ້ເລີ່ມສະແຫວງຫາ ທີ່ຈະທຳລາຍຂໍ້ບັງຄັບເລື່ອງຄວາມຊອບທຳໃນພຣະບັນຍັດຂອງພຣະເຈົ້າ ແມ່ນແຕ່ເມື່ອມັນຍັງຢູ່ທ່າມກາງ ຊາວສະຫວັນຜູ້ບໍ່ມີບາບ. {GC 261.2}

ຄຳສອນທີ່ວ່າພຣະເຈົ້າລິຂິດອຸປະນິໄສຂອງມະນຸດຈົນດັດແກ້ປ່ຽນແປງບໍ່ໄດ້ນັ້ນ ເປັນເຫດໃຫ້ຫຼາຍ ຄົນເໝືອນກັບປະຕິເສດກົດບັນຍັດຂອງພຣະເຈົ້າໄປເລີຍ. ຈອນ ເວສະລີ ໄດ້ຄັດຄ້ານຄຳສອນຜິດ ຂອງອາຈານເຫຼົ່ານັ້ນຢ່າງແຂງຂັນ ທີ່ພວກເຂົາປະຕິເສດພຣະບັນຍັດ ໂດຍເວສະລີສະແດງໃຫ້ເຫັນ ວ່າ ຄຳສອນອັນໃດທີ່ນຳໄປສູ່ການປະຕິເສດພຣະບັນຍັດນັ້ນ ແມ່ນຂັດຕໍ່ພຣະຄຳພີ. “ພຣະຄຸນຂອງ ພຣະເຈົ້າໄດ້ຊົງເປີດເຜີຍແລ້ວ ເພື່ອນຳຄວາມລອດພົ້ນໃຫ້*ຄົນທັງປວງ*.” “ການກະທຳເຊັ່ນນີ້ ເປັນສິ່ງທີ່ ດີ ແລະ ເປັນທີ່ພໍພຣະໄທພຣະເຈົ້າ ພຣະຜູ້ໂຜດຊ່ວຍໃຫ້ພົ້ນຂອງພວກເຮົາ. ພຣະອົງຊົງມີພຣະປະສົງ ໃຫ້*ທຸກຄົນ*ໄດ້ເຖິງຄວາມພົ້ນ ແລະ ໃຫ້ມາຮູ້ຈັກຄວາມຈິງ. ດ້ວຍວ່າ, ມີພຣະເຈົ້າອົງດຽວ ແລະ ມີຜູ້ກາງ ແຕ່ຜູ້ດຽວລະຫວ່າງພຣະເຈົ້າກັບມະນຸດ ຄືພຣະຄຣິສເຈົ້າເຢຊູຜູ້ຊົງສະພາບເປັນມະນຸດ, ຜູ້ທີ່ໄດ້ສະຫຼະ ພຣະອົງເອງ ເພື່ອເປັນຄ່າໄຖ່*ມະນຸດສະໂລກທຸກຄົນ*.” (ຕີໂຕ 2:11; 1 ຕີໂມທຽວ 2:3–6). ພຣະເຈົ້າ ປະທານພຣະວິນຍານຂອງພຣະອົງໂດຍບໍ່ຕ້ອງເສຍຄ່າ ເພື່ອເປີດໂອກາດໃຫ້ມະນຸດທຸກຄົນສາມາດ ເຂົ້າເຖິງຄວາມລອດໄດ້. ດັ່ງນັ້ນພຣະຄຣິສຊົງເປັນ, “ຄວາມສະຫວ່າງອັນແທ້ຈິງ,” ທີ່ “ສ່ອງແກ່ຄົນ ທັງປວງ.” (ໂຢຮັນ 1:9). ສາເຫດທີ່ຄົນບໍ່ໄດ້ຮັບຄວາມລອດ ກໍຍ້ອນພວກເຂົາຈົງໃຈປະຕິເສດຂອງ ປະທານແຫ່ງຊີວິດ. {GC 261.3}

ເວສະລີປົກປ້ອງພຣະບັນຍັດຂອງພຣະເຈົ້າ

ເວສະລີຕອບຄົນທີ່ອ້າງວ່າ ພຣະບັນຍັດສິບປະການຖືກຍົກເລີກພ້ອມກັບກົດພິທີກຳເມື່ອພຣະຄຣິສ ສິ້ນພຣະຊົນນັ້ນວ່າ: “ພຣະຄຣິສບໍ່ໄດ້ຍົກເລີກກົດສິນທຳ ອັນປະກອບດ້ວຍພຣະບັນຍັດສິບປະການ ເຊິ່ງ ເຫຼົ່າຜູ້ເຜີຍພຣະທຳໄດ້ສອນໃຫ້ຄົນຮັກສາ. ພຣະອົງບໍ່ໄດ້ມີຄວາມປາຖະໜາທີ່ຈະສະເດັດມາລຶບລ້າງສ່ວນ ໃດສ່ວນໜຶ່ງຂອງພຣະບັນຍັດເລີຍ. ພຣະບັນຍັດນັ້ນຍົກເລີກບໍ່ໄດ້ ເພາະພຣະບັນຍັດ ‘ຍືນຍົງ . . . ເປັນ ພະຍານອັນສັດຊື່ຢູ່ເທິງທ້ອງຟ້າ.’ (ເພງສັນລະເສີນ 89:37). . . . ພຣະບັນຍັດມີມາຕັ້ງແຕ່ປະຖົມມະການ

[18] *ສາລານຸກົມຂອງ ແມັກຄຼິນທັອກ ແລະ ສະຕອງ*, ບົດຄວາມເລື່ອງ “Antinomians.”

ຂອງໂລກ ເຊິ່ງ 'ບໍ່ໄດ້ຂຽນໃສ່ແຜ່ນຫີນ' (2 ໂກຣິນໂທ 3:3) ແຕ່ຂຽນໃສ່ຫົວໃຈຂອງມະນຸດທຸກຄົນ ຕັ້ງແຕ່ພວກເຂົາອອກມາຈາກພຣະຫັດຂອງພຣະຜູ້ສ້າງ. ເຖິງແມ່ນວ່າ ຕົວອັກສອນທີ່ພຣະເຈົ້າຊົງຂຽນໄວ້ດ້ວຍນິ້ວພຣະຫັດຂອງພຣະອົງນັ້ນ ໄດ້ຖືກຄວາມບາບຂີດຂ້າໄປຫຼາຍແລ້ວ, ແຕ່ມັນບໍ່ໄດ້ຖືກລຶບລ້າງຈົນໝົດ ຕາບໃດທີ່ພວກເຮົາຍັງສຳນຶກໃນຄວາມດີ ແລະ ຄວາມຊົ່ວ. ທຸກພາກສ່ວນຂອງພຣະບັນຍັດນີ້ ຕ້ອງມີຜົນບັງຄັບໃຊ້ຕໍ່ມະນຸດສະໂລກທັງປວງໃນທຸກຍຸກສະໄໝ; ເພາະວ່າພຣະບັນຍັດນັ້ນ ບໍ່ໄດ້ຂຶ້ນຢູ່ກັບການເວລາ, ສະຖານທີ່ ຫຼື ສະຖານະການທີ່ປ່ຽນແປງໄດ້, ແຕ່ຢູ່ເທິງພື້ນຖານທຳມະຊາດຂອງພຣະເຈົ້າ, ທຳມະຊາດຂອງມະນຸດ ແລະ ຄວາມສຳພັນທີ່ບໍ່ປ່ຽນແປງລະຫວ່າງພຣະເຈົ້າກັບມະນຸດ." *{GC 262.1}*

"ພຣະເຢຊູຊົງກ່າວວ່າ: 'ເຮົາບໍ່ໄດ້ມາລຶບລ້າງ ແຕ່ມາເຮັດໃຫ້ສຳເລັດຄົບຖ້ວນ.' (ມັດທາຍ 5:17).... ບໍ່ຕ້ອງສົງໄສເລີຍ, ຄວາມໝາຍຂອງພຣະອົງໃນຂໍ້ນີ້ສອດຄ່ອງກັບທຸກຂໍ້ທີ່ຊົງກ່າວກ່ອນ ແລະ ຫຼັງຈາກນັ້ນຄື ພຣະອົງສະເດັດມາເພື່ອສະຖາປະນາພຣະບັນຍັດຂຶ້ນຢ່າງສົມບູນ ແມ່ນວ່າມະນຸດຈະພະຍາຍາມວິເຄາະເປັນຢ່າງອື່ນກໍຕາມ; ພຣະອົງສະເດັດມາເພື່ອເປີດເຜີຍທຸກປະເດັນໃນພຣະບັນຍັດທີ່ມືດມົວ ຫຼື ເຂົ້າໃຈຍາກໃຫ້ກະຈ່າງແຈ້ງ; ພຣະອົງສະເດັດມາເພື່ອປະກາດຄວາມຈິງ ແລະ ຄວາມສຳຄັນຂອງທຸກສ່ວນຂອງພຣະບັນຍັດ, ເພື່ອສະແດງໃຫ້ເຫັນເຖິງຄວາມກວ້າງຍາວຂອງພຣະບັນຍັດທຸກຂໍ້ ວ່າມີຄວາມສູງເລິກປານໃດ, ຄືໃຫ້ເຫັນຄວາມບໍຣິສຸດ ແລະ ຄວາມໝາຍດ້ານຈິດວິນຍານຂອງພຣະບັນຍັດທີ່ເກີນຄວາມເຂົ້າໃຈ."[19] *{GC 262.2}*

ເອສະລີປະກາດວ່າ ພຣະບັນຍັດ ແລະ ຂ່າວປະເສີດມີຄວາມສອດຄ່ອງກັນຢ່າງສົມບູນ. "ສະນັ້ນ, ຈຶ່ງມີຄວາມສຳພັນຢ່າງໃກ້ຊິດທີ່ສຸດລະຫວ່າງພຣະບັນຍັດ ແລະ ຂ່າວປະເສີດ ທີ່ສາມາດຈະນຶກຈິນຕະນາການເຖິງໄດ້. ດ້ານໜຶ່ງ, ພຣະບັນຍັດໄດ້ກຽມທາງ ແລະ ຊີ້ໄປເຖິງຂ່າວປະເສີດຢູ່ຕະຫຼອດເວລາ, ສ່ວນອີກດ້ານໜຶ່ງ ຂ່າວປະເສີດໄດ້ນຳພາພວກເຮົາຢ່າງຕໍ່ເນື່ອງ ໃຫ້ເຮົາຮັກສາພຣະບັນຍັດໃຫ້ດີຂຶ້ນ. ຍົກຕົວຢ່າງ, ພຣະບັນຍັດຮຽກຮ້ອງໃຫ້ເຮົາຮັກພຣະເຈົ້າ, ຮັກເພື່ອນບ້ານ, ເປັນຄົນອ່ອນສຸພາບ, ຖ່ອມຕົວ ແລະ ບໍຣິສຸດ; ແຕ່ພວກເຮົາຮູ້ສຶກວ່າຕົນເອງບໍ່ມີກຳລັງພໍທີ່ຈະເຮັດສິ່ງເຫຼົ່ານີ້ໄດ້. ແທ້ຈິງ, 'ສຳລັບມະນຸດແລ້ວ ກໍເປັນໄປບໍ່ໄດ້;' ແຕ່ເຮົາເຫັນພຣະສັນຍາຂອງພຣະເຈົ້າທີ່ຈະປະທານຄວາມຮັກນັ້ນແກ່ເຮົາ ແລະ ຈະເຮັດໃຫ້ເຮົາເປັນຄົນທີ່ມີຄວາມອ່ອນນ້ອມຖ່ອມຕົນ ແລະ ມີຄວາມບໍຣິສຸດ. ພວກເຮົາຈຶ່ງຮັບເອົາຂ່າວປະເສີດນີ້ໄວ້, ເພາະເປັນຂ່າວທີ່ໜ້າຍິນດີ. ທັງໝົດນີ້ເປັນໄປຕາມຄວາມເຊື່ອຂອງພວກເຮົາ, 'ຄວາມຊອບທຳຂອງທຳມະບັນຍັດຈຶ່ງສຳເລັດໃນຕົວເຮົາ,' ຜ່ານຄວາມເຊື່ອເຊິ່ງມີຢູ່ໃນພຣະເຢຊູຄຣິສ...." *{GC 263.1}*

ເອສະລີກ່າວວ່າ: "ພວກສັດຕູແຫ່ງຂ່າວປະເສີດຂອງພຣະຄຣິສທີ່ມີຕຳແໜ່ງສູງທີ່ສຸດ ເປັນພວກທີ່ 'ຕັດສິນທຳມະບັນຍັດ' ຢ່າງເປີດເຜີຍ ແລະ ໂຈ່ງແຈ້ງ ທັງເປັນພວກທີ່ 'ກ່າວໂທດທຳມະບັນຍັດ' ແລະ ສອນໃຫ້ຄົນອື່ນລະເມີດທຳມະບັນຍັດ ໂດຍການ ຍົກເລີກ ແລະ ແກ້ຂໍ້ຜູກມັດຂອງກົດບັນຍັດ, ບໍ່ແມ່ນຂໍ້ໃດຂໍ້ໜຶ່ງເທົ່ານັ້ນ ແຕ່ແກ້ທຳມະບັນຍັດທັງໝົດພ້ອມກັນ.... ສິ່ງທີ່ໜ້າປະຫຼາດໃຈທີ່ສຸດໃນເລື່ອງຜົນທີ່ເກີດຂຶ້ນຈາກການຫຼອກລວງອັນຮ້າຍແຮງນີ້ ຄືຄົນທີ່ຫຼົງເຊື່ອຕາມກໍມີຄວາມໝັ້ນໃຈວ່າ ພວກເຂົາກຳລັງຖວາຍກຽດແດ່ພຣະຄຣິສ ໂດຍການລຶບລ້າງພຣະບັນຍັດຂອງພຣະອົງ ແລະ ເຊື່ອວ່າການທຳລາຍຄຳສອນຂອງພຣະເຢຊູ ເປັນການຍົກຍ້ອງພຣະອົງ! ແທ້ຈິງແລ້ວ, ພວກເຂົາໃຫ້ກຽດພຣະອົງຄືກັນກັບຢູດາ ເມື່ອລາວທັກທາຍພຣະເຢຊູວ່າ: 'ສະບາຍດີ ທ່ານອາຈານ.' (ມັດທາຍ 26:49). ພຣະອົງສາມາດ

[19] ເອສະລີ, ຄຳເທດສະໜາທີ 25.

ຕອບພວກເຂົາຢ່າງຖືກຕ້ອງວ່າ: 'ເຈົ້າຈະມອບບຸດມະນຸດດ້ວຍການຈູບຫຼື?' (ລູກາ 22:48). ມັນຄື ການທໍລະຍົດຕໍ່ພຣະເຢຊູດ້ວຍການຈູບນັ້ນແຫຼະ ທີ່ຈະເວົ້າເຖິງພຣະໂລຫິດໃນຂະນະທີ່ລັກເອົາມົງກຸດ ຈາກພຣະອົງ, ທີ່ຈະຫຼຸດຄວາມສຳຄັນຂອງສ່ວນໃດສ່ວນໜຶ່ງແຫ່ງທຳມະບັນຍັດຂອງພຣະອົງ ໂດຍອ້າງ ວ່າກຳລັງປະກາດຂ່າວປະເສີດຂອງພຣະອົງໃຫ້ກ້າວໜ້າໄປ. ແລ້ວບໍ່ມີໃຜຈະໜີຈາກການຖືກກ່າວຫານີ້ ໄດ້ ຖ້າຫາກວ່າລາວປະກາດເລື່ອງຄວາມເຊື່ອ ໂດຍໃຊ້ວິທີທີ່ລຶບລ້າງການເຊື່ອຟັງໃນທາງໃດທາງໜຶ່ງ, ຫຼື ປະກາດພຣະຄຣິສ ໃນລັກສະນະທີ່ຈະຍົກເລີກທຳມະບັນຍັດຂໍ້ໃດຂໍ້ໜຶ່ງ ຫຼື ເຮັດໃຫ້ທຳມະບັນຍັດຂໍ້ທີ່ ເລັກນ້ອຍທີ່ສຸດຂອງພຣະອົງດ້ອຍຄ່າລົງ."[20] *{GC 263.2}*

ພຣະບັນຍັດ ແລະ ຂ່າວປະເສີດສອດຄ່ອງກັນ

ສຳລັບຄົນທີ່ອ້າງວ່າ, "ການປະກາດຂ່າວປະເສີດຕອບຈຸດປະສົງທັງໝົດຂອງທຳມະບັນຍັດ," ເອສະລີ ຕອບວ່າ: "ເລື່ອງນີ້ພວກເຮົາຂໍປະຕິເສດຢ່າງສິ້ນເຊີງ. ມັນບໍ່ໄດ້ຕອບຈຸດປະສົງຂໍ້ທຳອິດຂອງທຳມະບັນຍັດ ເລີຍ, ຄືການຊ່ວຍໃຫ້ຄົນສຳນຶກເຖິງຄວາມບາບ ແລະ ການປຸກຄົນທີ່ກຳລັງຫຼັບໄຫຼຢູ່ຂອບເຫວນະຣົກ ໃຫ້ຕື່ນຂຶ້ນ." ອັກຄະສາວົກໂປໂລກ່າວວ່າ: "ກົດບັນຍັດໄດ້ເຮັດໃຫ້ສັງເກດຮູ້ຈັກຄວາມບາບ." (ໂຣມ 3:20). "ມະນຸດຜູ້ໃດຈະບໍ່ຮູ້ສຶກຢ່າງແທ້ຈິງວ່າ ຕົນຕ້ອງການພຣະໂລຫິດຂອງພຣະຄຣິສເພື່ອນຳໃຫ້ຕົນ ກັບຄືນດີກັບພຣະເຈົ້າ ຈົນກວ່າລາວຈະສຳນຶກໃນຄວາມບາບ . . . ຕາມທີ່ອົງພຣະຜູ້ເປັນເຈົ້າຂອງເຮົາຊົງ ສັງເກດວ່າ: 'ຄົນທີ່ມີສຸຂະພາບດີບໍ່ຕ້ອງການໝໍ ມີແຕ່ຄົນເຈັບປ່ວຍເທົ່ານັ້ນທີ່ຕ້ອງການໝໍ.' (ມັດທາຍ 9:12). ດັ່ງນັ້ນ, ຈຶ່ງເປັນເລື່ອງທີ່ບໍ່ມີເຫດຜົນທີ່ຈະນຳຄົນທີ່ສຸຂະພາບສົມບູນໄປຫາໝໍ ແລະ ຄົນທີ່ ຄິດວ່າຕົວເອງສົມບູນດີພ້ອມກໍເໝືອນກັນ. ທ່ານຕ້ອງໃຫ້ຄົນເຫຼົ່ານັ້ນສຳນຶກເສຍກ່ອນວ່າ ພວກເຂົາບໍ່ ສະບາຍ; ຖ້າບໍ່ດັ່ງນັ້ນພວກເຂົາຈະບໍ່ຂອບໃຈທ່ານສຳລັບຄວາມພະຍາຍາມຂອງທ່ານ. ການແນະນຳ ໃຫ້ຄົນທີ່ຈິດໃຈສົມບູນ ແລະ ຍັງບໍ່ສຳນຶກໃນຄວາມບາບໃຫ້ຮູ້ຈັກພຣະຄຣິສ ກໍເປັນເລື່ອງທີ່ເຫຼວໄຫຼ ແບບດຽວກັນ."[21] *{GC 264.1}*

ດັ່ງນັ້ນ, ໃນຂະນະທີ່ປະກາດຂ່າວປະເສີດເລື່ອງພຣະຄຸນຂອງພຣະເຈົ້າ, ເອສະລີພະຍາຍາມເຮັດ ເໝືອນພຣະຄຣິສໃນການ "ເຊີດຊູກົດບັນຍັດ ແລະ ເຮັດໃຫ້ກົດບັນຍັດນັ້ນມີກຽດ." (ເອຊາຢາ 42:21). ເພິ່ນເຮັດວຽກທີ່ພຣະເຈົ້າຊົງມອບໝາຍໃຫ້ຢ່າງສັດຊື່ ແລະ ພຣະເຈົ້າໃຫ້ເພິ່ນເຫັນເຖິງຜົນອັນຮຸ່ງເຮືອງ ທີ່ຕາມມາ. ເອສະລີໃຊ້ເວລາກວ່າ 50 ປີ ໃນການເດີນທາງປະກາດ ແລະ ເມື່ອເພິ່ນຈົບຊີວິດລົງໃນ ອາຍຸ 80 ກວ່າປີ ມີລູກສິດກວ່າເຄິ່ງລ້ານຄົນ. ແຕ່ຈຳນວນຄົນທີ່ຖືກຍົກຂຶ້ນຈາກຄວາມເສື່ອມເສຍ ຂອງຄວາມບາບມາສູ່ຊີວິດທີ່ສູງຂຶ້ນ ແລະ ບໍຣິສຸດຍ້ອນວຽກງານຂອງເພິ່ນ ແລະ ຈຳນວນຄົນທີ່ມີ ປະສົບການກັບພຣະເຈົ້າອັນເລິກເຊິ່ງຂຶ້ນຜ່ານຄຳສອນຂອງເພິ່ນນັ້ນ, ຈະບໍ່ໄດ້ຮູ້ຕົວເລກຄັກແນ່ ຈົນກວ່າ ຄອບຄົວທັງໝົດຂອງພຣະເຈົ້າທີ່ຊົງໄຖ່ໄວ້ນັ້ນ ຈະຖືກຮວບຮວມເຂົ້າໄປໃນອານາຈັກຂອງພຣະອົງ. ຊີວິດ ຂອງ ຈອນ ເອສະລີ ເປັນບົດຮຽນທີ່ລ້ຳຄ່າສຳລັບຄຣິສຕຽນທຸກຄົນ. ຢາກໃຫ້ສະມາຊິກຄຣິສຕະຈັກ ໃນປັດຈຸບັນມີຄວາມເຊື່ອ, ຄວາມຖ່ອມຕົນ, ຄວາມກະຕືລືລົ້ນທີ່ບໍ່ຮູ້ອິດຮູ້ເມື່ອຍ, ການເສຍສະຫຼະ ຕົນເອງ ແລະ ການອຸທິດຕົນເໝືອນຜູ້ຮັບໃຊ້ຂອງພຣະຄຣິສຄົນນີ້! *{GC 264.2}*

---

[20] *ອ້າງອີງຈາກທີ່ດຽວກັນ.*

[21] *ອ້າງອີງຈາກທີ່ດຽວກັນ,* ຄຳເທດສະໜາທີ 35.

15

ພຣະຄຳພີ ແລະ ການປະຕິວັດຝຣັ່ງ

ຜົນຮ້າຍຂອງການປະຕິເສດພຣະຄຳພີ

ການປະຕິຮູບຄັ້ງຍິ່ງໃຫຍ່ໃນສະຕະວັດທີ 16 ໄດ້ນຳສະເໜີພຣະຄຳພີທີ່ເປີດອອກໃຫ້ແກ່ປະຊາຊົນ; ຂະບວນການປະຕິຮູບນັ້ນ ໄດ້ຊອກຫາທາງທີ່ຈະເຂົ້າເຖິງທຸກປະເທດໃນເອີຣົບ. ບາງປະເທດໄດ້ຕ້ອນຮັບ ຄຳສອນຂອງຝ່າຍປະຕິຮູບດ້ວຍຄວາມດີໃຈ ສະເໝີອນໜຶ່ງເປັນຂ່າວຈາກສະຫວັນ. ແຕ່ໃນປະເທດ ອື່ນ ລະບອບສັນຕະປາປາສາມາດກີດຂວາງບໍ່ໃຫ້ຝ່າຍປະຕິຮູບເຂົ້າໄປໄດ້; ສະນັ້ນ, ແສງສະຫວ່າງ ຈາກພຣະຄຳພີທີ່ມີພະລັງໃນການພັດທະນາມະນຸດ ກໍຖືກກີດກັ້ນເກືອບທັງໝົດ. ມີປະເທດໜຶ່ງທີ່ ແສງສະຫວ່າງສ່ອງເຂົ້າໄປແລ້ວ ແຕ່ຝ່າຍຄວາມມືດບໍ່ຍອມຮັບ. ຄວາມຈິງ ແລະ ຄວາມເທັດໄດ້ຕໍ່ສູ້ ກັນຢ່າງຕໍ່ເນື່ອງເປັນເວລາຫຼາຍສະຕະວັດ. ໃນທີ່ສຸດຄວາມຊົ່ວເປັນຝ່າຍຊະນະ ແລະ ຄວາມຈິງຂອງ ສະຫວັນກໍຖືກຂັບໄລ່ອອກໄປ. “ການຕັດສິນລົງໂທດເປັນດັ່ງນີ້: ຄືວ່າຄວາມສະຫວ່າງໄດ້ເຂົ້າມາໃນ ໂລກ ແຕ່ມະນຸດໄດ້ຮັກຄວາມມືດຫຼາຍກວ່າຮັກຄວາມສະຫວ່າງ.” (ໂຢຮັນ 3:19). ປະເທດນັ້ນໄດ້ຖືກ ປະໄວ້ໃຫ້ເກັບກ່ຽວຜົນຈາກແນວທາງທີ່ມັນເລືອກ. ການຢັບຢັ້ງຂອງພຣະວິນຍານບໍຣິສຸດ ຖືກຖອນຄືນ ຈາກປະຊາຊົນທີ່ໝິ່ນປະໝາດຂອງປະທານແຫ່ງພຣະຄຸນຂອງພຣະອົງ. ຄວາມຊົ່ວຮ້າຍຖືກປ່ອຍປະໃຫ້ ງອກຂຶ້ນຈົນເປັນຄວາມຊົ່ວທີ່ສົມບູນ, ແລ້ວມະນຸດສະໂລກທັງປວງ ໄດ້ເຫັນໝາກຜົນແຫ່ງການຈົ່ງໃຈ ປະຕິເສດຄວາມສະຫວ່າງ. *{GC 265.1}*

ສົງຄາມຕໍ່ຕ້ານພຣະຄຳພີ ດຳເນີນໄປໃນປະເທດຝຣັ່ງຢ່າງຕໍ່ເນື່ອງຫຼາຍສະຕະວັດ ແລະ ສິ້ນສຸດລົງ ໃນການປະຕິວັດຝຣັ່ງ. ເຫດການອັນຮ້າຍແຮງນັ້ນ ເປັນຜົນໂດຍກົງຂອງການທີ່ຄຣິສຕະຈັກໂຣມໄດ້ປິດ ກັ້ນບໍ່ໃຫ້ປະຊາຊົນເຂົ້າເຖິງພຣະຄຳພີ ແລະ ເປັນຕົວຢ່າງທີ່ຊັດເຈນທີ່ສຸດ ເຖິງນະໂຍບາຍຂອງລະບອບ ສັນຕະປາປາ ເທົ່າທີ່ມະນຸດເຄີຍໄດ້ເຫັນ; ຄືເປັນຕົວຢ່າງໃຫ້ເຫັນວ່າ ຄຳສອນຂອງຄຣິສຕະຈັກໂຣມທີ່ ສອນກັນມາຕະຫຼອດພັນກວ່າປີນັ້ນ ນຳໄປສູ່ສິ່ງໃດແດ່. *{GC 265.2}*

ສອງພະຍານນຸ່ງຜ້າກະສອບ 1,260 ປີ

ການປາບປາມພຣະຄຳພີໃນຊ່ວງທີ່ລະບອບສັນຕະປາປາຄອງອຳນາດນັ້ນ ໄດ້ຖືກທຳນວາຍໄວ້ ລ່ວງໜ້າໂດຍບັນດາຜູ້ເຜີຍພຣະທຳ; ສ່ວນອັກຄະສາວົກໂຢຮັນໄດ້ຊີ້ບອກໃນພຣະທຳພຣະນິມິດ ໃຫ້ ເຫັນຜົນອັນຮ້າຍແຮງທີ່ປະເທດຝຣັ່ງໄດ້ຮັບ ໂດຍສະເພາະຈາກການຄອບຄອງຂອງ “ຜູ້ຊົ່ວຮ້າຍ.” (2 ເທສະໂລນີກ 2:3). *{GC 266.1}*

ທູດສະຫວັນຂອງພຣະຜູ້ເປັນເຈົ້າໄດ້ກ່າວວ່າ: “ພວກບໍ່ນັບຖືພຣະເຈົ້າ . . . ຈະຢຽບຢ່ຳນະຄອນສັກສິດ ເປັນເວລາ 42 ເດືອນ. ເຮົາຈະໃຊ້ພະຍານທັງສອງຂອງເຮົາມາ, ພວກເຂົາຈະນຸ່ງເສື້ອທີ່ເຮັດດ້ວຍຜ້າ ກະສອບເຂົ້າ ແລະ ຈະປະກາດຖ້ອຍຄຳຂອງພຣະເຈົ້າໃນລະຫວ່າງ 1,260 ວັນ. . . . ເມື່ອພະຍານທັງ

ສອງສິ້ນສຸດການປະກາດພຣະທຳຂອງພຣະເຈົ້າແລ້ວ ຈະມີສັດຮ້າຍອອກມາຈາກເຫວເລິກ ແລະ ຈະຕໍ່ສູ້ພວກເພິ່ນ. ສັດຮ້າຍນັ້ນຈະຊະນະພວກເພິ່ນ ແລະ ຂ້າພວກເພິ່ນເສຍ. ຊາກສົບຂອງທ່ານທັງສອງຈະຢູ່ເທິງຖະໜົນຂອງມະຫານະຄອນ ບ່ອນທີ່ອົງພຣະຜູ້ເປັນເຈົ້າຂອງພວກເພິ່ນໄດ້ຖືກຄຶງໄວ້ທີ່ໄມ້ກາງແຂນ. ຊື່ອັນເປັນສັນຍະລັກຂອງນະຄອນນີ້ ແມ່ນເມືອງໂຊໂດມ ແລະ ເມືອງເອຢິບ. . . . ຄົນທົ່ວໂລກ ຕ່າງກໍຈະດີໃຈທີ່ພະຍານທັງສອງນີ້ຕາຍໄປແລ້ວ; ພວກເຂົາຈະສະເຫຼີມສະຫຼອງ ແລະ ສົ່ງຂອງຂວັນໃຫ້ກັນແລະກັນ, ເພາະຜູ້ປະກາດພຣະທຳທັງສອງນີ້ ໄດ້ນຳຄວາມທໍລະມານຢ່າງໜັກມາສູ່ມະນຸດທັງຫຼາຍ. ຫຼັງຈາກສາມວັນເຄິ່ງຜ່ານໄປແລ້ວ ລົມຫາຍໃຈທີ່ມີຊີວິດມາຈາກພຣະເຈົ້າ ກໍໄດ້ເຂົ້າໄປໃນຊາກສົບຂອງພວກເພິ່ນ ແລະ ທັງສອງໄດ້ລຸກຂຶ້ນ ແລະ ທຸກຄົນທີ່ໄດ້ເຫັນພວກເພິ່ນຕ່າງກໍຕົກໃຈຢ້ານກົວຢ່າງໃຫຍ່ຫຼວງ.” (ພຣະນິມິດ 11:2–11). *{GC 266.2}*

ໄລຍະເວລາທີ່ກ່າວມານີ້ຄື “ສີ່ສິບສອງເດືອນ,” ແລະ “1,260 ວັນ,” ແມ່ນໄລຍະເວລາດຽວກັນ, ຄືເວລາເຊິ່ງກຸ່ມຄົນທີ່ເຊື່ອໃນພຣະຄຣິສຈະຕ້ອງຖືກຂົ່ມເຫັງຈາກຄຣິສຕະຈັກໂຣມ.[1] 1,260 ປີ ແຫ່ງການປົກຄອງຂອງລະບອບສັນຕະປາປາເລີ່ມຕົ້ນໃນປີ ຄ.ສ. 538; ສະນັ້ນ, ກໍຕ້ອງສິ້ນສຸດໃນປີ 1798. ໃນປີນັ້ນກອງທັບປະເທດຝຣັ່ງໄດ້ບຸກເຂົ້າໄປໃນນະຄອນໂຣມ ຈັບສັນຕະປາປາໃຫ້ເປັນຊະເລີຍ ແລະ ເພິ່ນກໍເສຍຊີວິດໃນຕ່າງແດນ. ເຖິງແມ່ນວ່າ ມີການເລືອກສັນຕະປາປາອົງໃໝ່ກໍຕາມ, ຕັ້ງແຕ່ນັ້ນມາລະບອບສັນຕະປາປາບໍ່ເຄີຍມີອຳນາດເໝືອນໃນສະໄໝກ່ອນ. *{GC 266.3}*

ການຂົ່ມເຫັງຄຣິສຕະຈັກບໍ່ໄດ້ດຳເນີນຕໍ່ເນື່ອງຕະຫຼອດໄລຍະເວລາ 1,260 ປີ. ພຣະເຈົ້າຊົງເມດຕາໄພ່ພົນຂອງພຣະອົງ ໂດຍການຕັດເວລາແຫ່ງການທົດລອງດ້ວຍໄຟນັ້ນໃຫ້ສັ້ນລົງ. ພຣະຜູ້ຊ່ວຍໃຫ້ລອດຊົງທຳນວາຍເຖິງຄວາມທຸກຍາກລຳບາກທີ່ຈະເກີດຂຶ້ນກັບຄຣິສຕະຈັກວ່າ: “ຖ້າພຣະເຈົ້າບໍ່ໄດ້ເຮັດໃຫ້ວັນເຫຼົ່ານັ້ນສັ້ນເຂົ້າແລ້ວ ກໍຈະບໍ່ມີມະນຸດຄົນໃດພົ້ນໄດ້, ແຕ່ເພື່ອເຫັນແກ່ປະຊາຊົນທີ່ພຣະອົງໄດ້ເລືອກໄວ້ນັ້ນ ພຣະເຈົ້າຈະເຮັດໃຫ້ວັນເຫຼົ່ານັ້ນສັ້ນເຂົ້າ.” (ມັດທາຍ 24:22). ແລ້ວຍ້ອນອິດທິພົນຂອງການປະຕິຮູບຄັ້ງໃຫຍ່ໃນສະຕະວັດທີ 16 ການຂົ່ມເຫັງໄດ້ສິ້ນສຸດລົງກ່ອນປີ 1798. *{GC 266.4}*

ຜູ້ເຜີຍພຣະທຳກ່າວເຖິງພະຍານສອງຄົນນັ້ນຕື່ມອີກວ່າ: “ພະຍານທັງສອງໄດ້ແກ່: ຕົ້ນກອກເທດສອງຕົ້ນ ແລະ ຄັນຕະກຽງຄຳສອງອັນ ເຊິ່ງຕັ້ງໄວ້ຢູ່ຕໍ່ໜ້າອົງພຣະຜູ້ເປັນເຈົ້າແຫ່ງແຜ່ນດິນໂລກ.” ສ່ວນຜູ້ປະພັນບົດເພງສັນລະເສີນໄດ້ຂຽນວ່າ: “ຖ້ອຍຄຳຂອງພຣະອົງເປັນແສງໂຄມນຳທາງໃຫ້ຂ້ານ້ອຍ ແລະ ແສງແຈ້ງສຳລັບທາງເດີນໃຫ້ຂ້ານ້ອຍ.” (ພຣະນິມິດ 11:4; ເພງສັນລະເສີນ 119:105). ພະຍານທັງສອງນັ້ນ ໝາຍເຖິງພຣະຄຳພີເດີມ ແລະ ພຣະຄຳພີໃໝ່. ທັງສອງພາກຂອງພຣະຄຳພີໄດ້ເປັນພະຍານທີ່ສຳຄັນເຖິງຕົ້ນກຳເນີດແຫ່ງກົດບັນຍັດຂອງພຣະເຈົ້າ, ທັງໄດ້ຢືນຢັນວ່າກົດບັນຍັດນັ້ນດຳລົງຢູ່ຢ່າງຖາວອນນິຣັນ; ທັງສອງຍັງເປັນພະຍານເຖິງແຜນການແຫ່ງຄວາມລອດ. ສັນຍະລັກ, ພິທີຖວາຍບູຊາ ແລະ ຄຳທຳນວາຍຂອງພຣະຄຳພີເດີມ ໄດ້ຊີ້ໄປຂ້າງໜ້າເຖິງພຣະຜູ້ຊ່ວຍໃຫ້ລອດທີ່ຈະສະເດັດມາ. ສ່ວນໜັງສືພຣະກິດຕິຄຸນ ແລະ ຈົດໝາຍຕ່າງ ໆ ຂອງພຣະຄຳພີໃໝ່ ໄດ້ບອກເຖິງພຣະຜູ້ຊ່ວຍໃຫ້ລອດທີ່ສະເດັດມາແລ້ວຕາມຄຳພະຍາກອນ ແລະ ກົງກັບຄວາມໝາຍຂອງສັນຍະລັກຕ່າງ ໆ ທຸກປະການ. *{GC 267.1}*

“ພວກເຂົາຈະນຸ່ງເສື້ອທີ່ເຮັດດ້ວຍຜ້າກະສອບເຂົ້າ ແລະ ຈະປະກາດຖ້ອຍຄຳຂອງພຣະເຈົ້າໃນລະຫວ່າງ 1,260 ວັນ.” ໃນໄລຍະເວລານີ້ສ່ວນຫຼາຍພຣະຄຳພີຍັງຢູ່ໃນສະພາບທີ່ຄົນບໍ່ຮູ້ຫຼາຍ. ລະບອບສັນຕະປາປາພະຍາຍາມປິດບັງພຣະຄຳແຫ່ງຄວາມຈິງຈາກປະຊາຊົນ ແລະ ຕັ້ງພະຍານເທັດຕໍ່ໜ້າພວກເຂົາທີ່ຂັດແຍ້ງຄຳສອນຂອງພຣະຄຳພີ. ເມື່ອຄຣິສຕະຈັກຫ້າມການອ່ານພຣະຄຳພີ ແລະ ອຳນາດ

[1] ໜຶ່ງວັນແຫ່ງຄຳພະຍາກອນເທົ່າກັບໜຶ່ງປີ. ເບິ່ງ ຈົດບັນຊີ 14:34; ເອເຊກຽນ 4:6.

ການປົກຄອງປະກາດວ່າພຣະຄຳພີເປັນສິ່ງທີ່ຜິດກົດໝາຍ; ເມື່ອຄຳສອນຂອງພຣະຄຳພີຖືກບິດເບືອນ ໂດຍມີກຸ່ມຄົນ ແລະ ຜີມານພະຍາຍາມເຮັດທຸກວິທີທາງ ເພື່ອບໍ່ໃຫ້ປະຊາຊົນສົນໃຈໃນພຣະຄຳ; ເມື່ອຜູ້ທີ່ ປະກາດຄວາມຈິງອັນສັກສິດຂອງພຣະຄຳພີດ້ວຍໃຈກ້າໄດ້ຖືກໄລ່ລ່າ, ຖືກທໍລະຍົດ, ຖືກທໍລະມານ, ຖືກ ຂັງໃນຄຸກມືດ ແລະ ຖືກຂ້າຍ້ອນຄວາມເຊື່ອ ຫຼື ຕ້ອງຫຼົບໜີໄປຢູ່ຕາມພູ ແລະ ຕາມຖ້ຳ; ເມື່ອນັ້ນ ແຫຼະ ຄືເວລາທີ່ພະຍານທັງສອງປະກາດ ໂດຍການນຸ່ງຜ້າກະສອບ. ຢ່າງໃດກໍຕາມ, ພະຍານທັງສອງ ນັ້ນຍັງຄົງປະກາດຢ່າງຕໍ່ເນື່ອງຕະຫຼອດໄລຍະເວລາ 1,260 ປີ. ໃນຊ່ວງເວລາທີ່ມືດມົວທີ່ສຸດ ມີຄົນ ທີ່ສັດຊື່ທີ່ຮັກພຣະຄຳຂອງພຣະເຈົ້າ ແລະ ບໍ່ຍອມໃຫ້ຄົນອື່ນລົບໜູ່ພຣະກຽດຂອງພຣະອົງ. ພຣະເຈົ້າ ປະທານໃຫ້ຜູ້ຮັບໃຊ້ທີ່ສັດຊື່ເຫຼົ່ານີ້ໄດ້ຮັບສະຕິປັນຍາ, ຣິດທານຸພາບ ແລະ ສິດອຳນາດເພື່ອປະກາດ ຄວາມຈິງຂອງພຣະອົງຕະຫຼອດເວລາດັ່ງກ່າວ. *{GC 267.2}*

“ຖ້າຜູ້ໃດພະຍາຍາມເຮັດຮ້າຍໃຫ້ພະຍານທັງສອງນັ້ນ ໄຟຈະອອກມາຈາກປາກຂອງພວກເພິ່ນ ແລະ ເຜົາຜານສັດຕູຂອງພວກເພິ່ນເສຍ. ຖ້າຜູ້ໃດທີ່ຢາກທຳຮ້າຍພວກເພິ່ນ ຜູ້ນັ້ນກໍຕ້ອງຕາຍ ຢ່າງນັ້ນ.” (ພຣະນິມິດ 11:5). ມະນຸດບໍ່ສາມາດຢຽບຢ້ຳພຣະຄຳຂອງພຣະເຈົ້າໂດຍບໍ່ໄດ້ຮັບການ ລົງໂທດ. ຄວາມໝາຍຂອງການກ່າວປະນາມທີ່ໜ້າຢ້ານກົວນີ້ ໄດ້ບັນທຶກໄວ້ໃນພຣະທຳພຣະນິມິດບົດ ສຸດທ້າຍວ່າ: “ຝ່າຍຂ້າພະເຈົ້າຂໍເຕືອນທຸກຄົນທີ່ໄດ້ຍິນຄຳທຳນວາຍທັງຫຼາຍໃນໜັງສືມ້ວນນີ້ວ່າ, ‘ຖ້າ ຜູ້ໃດຈະເພີ່ມເຕີມຂໍ້ຄວາມໃດ ໆ ໃສ່ໃນໜັງສືມ້ວນນີ້ ພຣະເຈົ້າຈະເອົາໄພພິບັດທີ່ຂຽນໄວ້ໃນໜັງສືມ້ວນນີ້ ເພີ່ມເຕີມໃຫ້ແກ່ຜູ້ນັ້ນ. ຖ້າຜູ້ໃດຕັດຂໍ້ຄວາມໃດໜຶ່ງອອກຈາກຄຳທຳນວາຍໃນໜັງສືມ້ວນນີ້ ພຣະເຈົ້າຈະ ຊົງຕັດສ່ວນແບ່ງຂອງຜູ້ນັ້ນອອກຈາກຕົ້ນໄມ້ແຫ່ງຊີວິດ ແລະ ແຫ່ງນະຄອນສັກສິດ ເຊິ່ງໄດ້ຂຽນໄວ້ໃນ ໜັງສືມ້ວນນີ້.’” (ພຣະນິມິດ 22:18, 19). *{GC 268.1}*

ນີ້ແມ່ນຖ້ອຍຄຳທີ່ພຣະເຈົ້າຊົງຕັກເຕືອນມະນຸດ ເພື່ອປ້ອງກັນບໍ່ໃຫ້ຜູ້ໃດປ່ຽນແປງພຣະບັນຊາ ຫຼື ສິ່ງ ທີ່ພຣະອົງຊົງສຳແດງ ບໍ່ວ່າທາງໃດກໍຕາມ. ການປະນາມອັນໜັກແໜ້ນເຫຼົ່ານີ້ ໃຊ້ໄດ້ກັບທຸກຄົນທີ່ ໂນ້ມນ້າວຄົນອື່ນ ໃຫ້ຖືວ່າພຣະບັນຍັດຂອງພຣະເຈົ້າເປັນສິ່ງທີ່ບໍ່ສຳຄັນ. ຄຳເຕືອນດັ່ງກ່າວຄວນເຮັດໃຫ້ ຄົນສະທ້ານຢ້ານກົວທີ່ຈະກ່າວຢອກຫຼີ້ນວ່າ ການເຊື່ອຟັງ ຫຼື ບໍ່ເຊື່ອຟັງພຣະບັນຍັດນັ້ນບໍ່ແມ່ນເລື່ອງ ໃຫຍ່. ທຸກຄົນທີ່ຍົກຄວາມຄິດເຫັນຂອງຕົນເອງຢູ່ເໜືອພຣະຄຳຂອງພຣະເຈົ້າ ແລະ ທຸກຄົນທີ່ຄິດ ຈະປ່ຽນຄວາມໝາຍຕົ້ງຕົ້ວຂອງພຣະຄຳພີຕາມຄວາມສະດວກຂອງຕົນເອງ ຫຼື ເພື່ອໃຫ້ເປັນໄປຕາມ ຄວາມຄິດຂອງຊາວໂລກ ລ້ວນແຕ່ຕ້ອງຮັບຜິດຊອບຕໍ່ຜົນອັນໜ້າຢ້ານກົວທີ່ຈະຕາມມາ. ຖ້ອຍຄຳທີ່ຂຽນ ບັນທຶກໄວ້ໃນພຣະຄຳພີ ແລະ ພຣະບັນຍັດຂອງພຣະເຈົ້າເປັນບັນທັດຖານທີ່ຈະວັດແທກອຸປະນິໄສຂອງ ມະນຸດທຸກຄົນ ແລະ ຈະກ່າວໂທດທຸກຄົນທີ່ບໍ່ຜ່ານການທົດສອບອັນບໍ່ມີຄວາມຜິດພາດນີ້. *{GC 268.2}*

ພຣະຄຳພີຂຽນໄວ້ວ່າ: “ເມື່ອພະຍານທັງສອງສິ້ນສຸດ (ຫຼື ກຳລັງສິ້ນສຸດ) ການປະກາດພຣະທຳຂອງ ພຣະເຈົ້າ, . . .” ເຊິ່ງໄລຍະເວລາທີ່ພະຍານທັງສອງໄດ້ທຳນວາຍໂດຍນຸ່ງຜ້າກະສອບນັ້ນ ໄດ້ສິ້ນສຸດລົງໃນປີ 1798. ຕາມຄຳພະຍາກອນ, ໃນຂະນະທີ່ພຣະຄຳພີເດີມ ແລະ ພຣະຄຳພີໃໝ່ໃກ້ຈະສິ້ນສຸດການປະກາດ ຢ່າງບໍ່ເປັນທີ່ຮັບຮູ້ຂອງຄົນສ່ວນຫຼາຍນັ້ນ, ຈະເກີດສົງຄາມຂຶ້ນຕໍ່ສູ້ພຣະຄຳພີໂດຍອຳນາດເຊິ່ງມີສັນຍະລັກ ວ່າເປັນ “ສັດຮ້າຍອອກມາຈາກເຫວເລິກ.” ໃນຫຼາຍປະເທດຂອງເອີຣົບ ທັງຝ່າຍບໍລິຫານຄຣິສຕະຈັກ ແລະ ອຳນາດປົກຄອງຂອງລັດ ໄດ້ຖືກຄວບຄຸມໂດຍຊາຕານຜ່ານລະບອບສັນຕະປາປາເປັນເວລາຫຼາຍ ສະຕະວັດ. ແຕ່ພໍມາເຖິງຊ່ວງນີ້ ກໍມີປາກົດການແຫ່ງອຳນາດຂອງຊາຕານໃນຮູບແບບໃໝ່. *{GC 268.3}*

ທີ່ຜ່ານມາ, ຄຣິສຕະຈັກໂຣມມີນະໂຍບາຍເກັບຮັກສາພຣະຄຳພີໄວ້ໃນພາສາທີ່ຄົນສ່ວນຫຼາຍບໍ່ ຮູ້ຈັກ ເພື່ອປະຊາຊົນຈະບໍ່ສາມາດອ່ານເຂົ້າໃຈໄດ້; ພວກເຂົາອ້າງວ່າການເຮັດຢ່າງນັ້ນ ເປັນການສະແດງ

ຄວາມເຄົາລົບນັບຖືຕໍ່ພຣະຄຳພີ. ສະນັ້ນ, ໃນໄລຍະເວລາທີ່ຄຣິສຕະຈັກໂຣມປົກຄອງຢູ່ ພະຍານທັງ ສອງຕ້ອງທຳນວາຍໂດຍ “ນຸ່ງຜ້າກະສອບ.” ແຕ່ມີອຳນາດອີກຢ່າງໜຶ່ງ ຄືສັດຮ້າຍທີ່ອອກມາຈາກເຫວ ເລິກນັ້ນ ຂຶ້ນມາປະກາດສົງຄາມຕໍ່ສູ້ພຣະຄຳຂອງພຣະເຈົ້າຢ່າງເປີດເຜີຍ. {GC 269.1}

ຄືກັບປະເທດເອຢິບ ແລະ ເມືອງໂຊໂດມ

ສົບຂອງພະຍານທັງສອງ “ຈະຢູ່ເທິງຖະໜົນຂອງມະຫານະຄອນ” ເຊິ່ງ ປະເທດເອຢິບແມ່ນ “ຊື່ ອັນເປັນສັນຍະລັກຂອງນະຄອນນີ້.” ທ່ານກາງປະເທດທັງຫຼາຍທີ່ໄດ້ຮັບການບັນທຶກໄວ້ໃນປະຫວັດສາດ ພຣະຄຳພີ ເອຢິບແມ່ນປະເທດທີ່ປະຕິເສດຢ່າງໜ້າດ້ານທີ່ສຸດວ່າ ມີພຣະເຈົ້າຜູ້ຊົງພຣະຊົນຢູ່ ທັງ ເປັນປະເທດທີ່ຂັດຂືນຕໍ່ພຣະບັນຊາຂອງພຣະອົງຫຼາຍທີ່ສຸດ. ບໍ່ມີກະສັດອົງໃດເຄີຍກະບົດຕໍ່ອຳນາດ ຂອງສະຫວັນຢ່າງເປີດເຜີຍ ແລະ ດ້ວຍຄວາມຫຍິ່ງຍະໂສຫຼາຍກວ່າກະສັດແຫ່ງເອຢິບ. ເມື່ອໂມເຊ ນຳຂ່າວມາໃນພຣະນາມຂອງພຣະເຈົ້າ ເພື່ອທູນກະສັດຟາໂຣນັ້ນ, ເພິ່ນຕອບຢ່າງຫຍິ່ງທະນົງວ່າ: “ອົງພຣະຜູ້ເປັນເຈົ້າແມ່ນໃຜ? ເປັນຫຍັງເຮົາຈະຕ້ອງຟັງ ແລະ ປ່ອຍປະຊາຊົນພວກນີ້ໄປ? ເຮົາບໍ່ຮູ້ຈັກ ອົງພຣະຜູ້ເປັນເຈົ້າ ແລະ ເຮົາຈະບໍ່ປ່ອຍປະຊາຊົນອິດສະຣາເອນໄປ.” (ອົບພະຍົບ 5:2 LO2012). ນີ້ ແມ່ນການບໍ່ເຊື່ອວ່າມີພຣະເຈົ້າ; ສະແດງວ່າ ປະເທດທີ່ຄຳພະຍາກອນກ່າວເຖິງນັ້ນ ຈະປະຕິເສດວ່າມີ ພຣະເຈົ້າຜູ້ຊົງພຣະຊົນ ແລະ ຈະມີທ່າທີບໍ່ເຊື່ອ, ແລະຈະທ້າທາຍສະຫວັນເຊັ່ນດຽວກັບປະເທດເອຢິບໃນ ສະໄໝຂອງໂມເຊ. ນອກຈາກນັ້ນ “ມະຫານະຄອນ” ນັ້ນ ຍັງມີອີກຊື່ໜຶ່ງຕາມຄວາມໝາຍສັນຍະລັກ ວ່າ, “ເມືອງໂຊໂດມ.” ຄວາມຊົ່ວຂອງເມືອງໂຊໂດມໃນການລະເມີດພຣະບັນຍັດຂອງພຣະເຈົ້າ ໄດ້ສະແດງ ອອກໂດຍສະເພາະໃນການເຮັດຜິດສິນທຳໃນເລື່ອງການາລົມ. ສະແດງວ່າ ປະເທດທີ່ເປັນໄປຕາມ ຄຳພະຍາກອນດັ່ງກ່າວ ຈະມີລັກສະນະສະເພາະໃນເລື່ອງການຜິດປະເວນີ. {GC 269.2}

ສະນັ້ນ, ຕາມຖ້ອຍຄຳຂອງຜູ້ເຜີຍພຣະທຳໂຢຮັນ, ກ່ອນປີ 1798 ໜ້ອຍໜຶ່ງ ຈະມີອຳນາດໜຶ່ງ ຂຶ້ນມາ ເຮັດສົງຄາມຕໍ່ສູ້ກັບພຣະຄຳພີ ໂດຍອຳນາດນັ້ນມາຈາກຊາຕານ ແລະ ມີລັກສະນະເໝືອນ ຊາຕານ. ນອກຈາກນັ້ນ, ໃນແຜ່ນດິນທີ່ມີການປິດປາກພະຍານທັງສອງຂອງພຣະເຈົ້າ ຄົນທັງຫຼາຍ ຈະບໍ່ເຊື່ອວ່າມີພຣະເຈົ້າຄ້າຍຄືກະສັດຟາໂຣ ແລະ ຈະປ່ອຍຕົວເຮັດຜິດປະເວນີເໝືອນດັ່ງຄົນໃນເມືອງ ໂຊໂດມ. {GC 269.3}

ຄຳພະຍາກອນນີ້ ໄດ້ສຳເລັດຢ່າງເຈາະຈົງແນ່ນອນທີ່ສຸດໃນປະຫວັດສາດຂອງປະເທດຝຣັ່ງ. ໃນ ປີ 1793 ລະຫວ່າງການປະຕິວັດຝຣັ່ງ, “ເປັນຄັ້ງທຳອິດທີ່ໂລກໄດ້ຍິນປະຊຸມສະພາລົງມະຕິເປັນ ເອກະສັນ ເພື່ອປະຕິເສດຄວາມຈິງອັນສຳຄັນທີ່ສຸດເຊິ່ງມະນຸດເຄີຍໄດ້ຮັບນັ້ນ ກໍຄືຄວາມເຊື່ອ ແລະ ການ ນະມັດສະການພຣະເຈົ້າ; ໂດຍສະມາຊິກສະພາດັ່ງກ່າວລ້ວນແຕ່ເປັນຄົນທີ່ມີການສຶກສາສູງ ແລະ ເກີດ ມາພ້ອມກັບຄວາມສີວິໄລ, ທັງອ້າງເອົາສິດໃນການປົກຄອງໜຶ່ງໃນປະເທດທີ່ຈະເລີນທີ່ສຸດຂອງເອີຣົບ.”[2] “ປະເທດຝຣັ່ງ ເປັນປະເທດດຽວໃນໂລກ ເທົ່າທີ່ມີການບັນທຶກໃນປະຫວັດສາດ ທີ່ປະຊາຊົນທັງຊາດ ພ້ອມໃຈກັນກະບົດຕໍ່ພຣະຜູ້ສ້າງຈັກກະວານ. ໃນປະເທດອັງກິດ, ເຢຍລະມັນ, ແອັດສະປາຍ (Spain) ແລະ ປະເທດອື່ນໆ ມີຫຼາຍຄົນໝິ່ນປະໝາດພຣະເຈົ້າ, ມີຫຼາຍຄົນບໍ່ເຊື່ອໃນພຣະອົງ; ແຕ່ປະເທດ ຝຣັ່ງເປັນປະເທດດຽວໃນປະຫວັດສາດໂລກ ທີ່ລົງມະຕິໃນສະພານິຕິບັນຍັດແຫ່ງຊາດເພື່ອປະກາດວ່າບໍ່ມີ ພຣະເຈົ້າ. ແລ້ວຊາວເມືອງທັງໝົດທັງຊາຍ ແລະ ຍິງຂອງນະຄອນຫຼວງ ພ້ອມດ້ວຍປະຊາຊົນຈຳນວນ ຫຼວງຫຼາຍໃນບ່ອນອື່ນພາກັນຟ້ອນລຳ ແລະ ຮ້ອງເພງເມື່ອໄດ້ຍິນຄຳປະກາດດັ່ງກ່າວ.”[3] {GC 269.4}

[2] ເຊີ ວອນເຕີ ສະກ໊ອດ (Sir Walter Scott), *ຊີວິດຂອງນາໂປເລອົງ*, ເຫຼັ້ມ 1, ບົດ 17.

[3] ວາລະສານ *Blackwood's Magazine*, ພະຈິກ 1870.

ປະເທດຝຣັ່ງ ຍັງໄດ້ສະແດງເຖິງລັກສະນະທີ່ໂດດເດັ່ນຂອງເມືອງໂຊໂດມ. ໃນການປະຕິວັດຝຣັ່ງນັ້ນ ມີການເຮັດຜິດສິນທຳຢ່າງຕ່ຳຊ້າເສື່ອມຊາມ ຄ້າຍຄືກັບຄວາມຊົ່ວທີ່ນຳໄປສູ່ການທຳລາຍເມືອງໂຊໂດມ ແລະ ເມືອງໂກໂມຣາ. ນັກປະຫວັດສາດໄດ້ຂຽນເຖິງການປະຕິເສດພຣະເຈົ້າ ແລະ ການມັກມາກໃນການຂອງປະເທດຝຣັ່ງຕາມທີ່ຜູ້ເຜີຍພຣະທຳໄດ້ທຳນວາຍໄວ້ດັ່ງນີ້: “ການແຕ່ງງານເປັນຄວາມຜູກພັນທີ່ສັກສິດທີ່ສຸດຂອງມະນຸດ, ເມື່ອຄົນແຕ່ງງານຕະຫຼອດຊີວິດເຮັດໃຫ້ສັງຄົມໝັ້ນຄົງເປັນປຶກແຜ່ນ. ໃນການປະຕິວັດຝຣັ່ງມີເລື່ອງໜຶ່ງທີ່ຕິດພັນຢ່າງໃກ້ຊິດກັບກົດໝາຍທີ່ສົ່ງຜົນກະທົບຕໍ່ສາສະໜາ ນັ້ນຄືກົດໝາຍທີ່ໃຫ້ຄວາມສຳຄັນຂອງການແຕ່ງງານຫຼຸດໜ້ອຍລົງ ໂດຍໃຫ້ເປັນການສັນຍາຊົ່ວຄາວທີ່ໃຜກໍໄດ້ ສອງຄົນສາມາດເຊັນຮັບ ຫຼື ຈີກຖິ້ມຕາມໃຈມັກ. . . . ຖ້າພວກຜີສາດມານຮ້າຍໄດ້ຕັ້ງໜ້າຕັ້ງຕາ ເພື່ອຄົ້ນຫາວິທີທຳລາຍທຸກສິ່ງທີ່ດີງາມໜ້ານັບຖື ແລະ ຄົງທົນໃນຊີວິດຄອບຄົວ ແລະ ໃນຂະນະດຽວກັນຮັບປະກັນວ່າ ແຜນການຊົ່ວຂອງມັນຈະສືບຕໍ່ໄປໃນແຕ່ລະລຸ້ນຄົນ ກໍຄົງບໍ່ສາມາດຫາແຜນການທີ່ດີໄປກວ່າການຫຼຸດຄວາມສັກສິດຂອງຊີວິດສົມຣົດໃຫ້ໜ້ອຍລົງ. . . . ນາງ ໂຊຟີ ອາໂນ ນັກສະແດງທີ່ມີຊື່ສຽງໃນເລື່ອງຄຳເວົ້າທີ່ຄົມຄາຍ ໄດ້ບັນລະຍາຍເຖິງພິທີແຕ່ງງານ ທີ່ໃຜຈະຢ່າຮ້າງຍາມໃດກໍໄດ້ນັ້ນວ່າ ເປັນ ‘ພິທີສະຫຼອງການຫຼິ້ນຊູ້.’”[4] *{GC 270.1}*

ປະເທດຝຣັ່ງເຂັ່ນຂ້າຄຣິສຕຽນ

“ບ່ອນທີ່ອົງພຣະຜູ້ເປັນເຈົ້າຂອງພວກເພິ່ນໄດ້ຖືກຄຶງໄວ້ທີ່ໄມ້ກາງແຂນ.” ລາຍລະອຽດຂອງຂໍ້ນີ້ກໍຍັງໄດ້ຮັບຄວາມສຳເລັດໂດຍປະເທດຝຣັ່ງ. ກ່ອນໜ້ານີ້ ບໍ່ເຄີຍມີປະເທດໃດທີ່ສະແດງຄວາມຈົງກຽດຈົງຊັງຕໍ່ພຣະຄຣິສເໝືອນປະເທດນັ້ນ; ບໍ່ມີປະເທດໃດທີ່ຕໍ່ຕ້ານຄວາມຈິງຢ່າງຂົ່ມຂົ່ມ ແລະ ໂຫດຮ້າຍເທົ່າກັບປະເທດດັ່ງກ່າວ. ໃນການຂົ່ມເຫັງຜູ້ທີ່ຮັບເຊື່ອໃນຂ່າວປະເສີດ, ປະເທດຝຣັ່ງໄດ້ຄຶງພຣະຄຣິສໂດຍຜ່ານພວກສາວົກຂອງພຣະອົງ. *{GC 271.1}*

ມີການຂ້າຜູ້ຊອບທຳຢ່າງຕໍ່ເນື່ອງເປັນເວລາຫຼາຍສະຕະວັດ. ໃນຂະນະທີ່ຊາວໂວດົວສະຫຼະຊີວິດຢູ່ເທິງສາຍພູພີດມົງ “ເພາະໄດ້ປະກາດພຣະທຳຂອງພຣະເຈົ້າ ແລະ ເນື່ອງດ້ວຍການເປັນພະຍານຝ່າຍພຣະເຢຊູ,”[5] ພີ່ນ້ອງຂອງພວກເຂົາ ຄືຊາວອັນບີເຈນ (Albigenses) ກໍໄດ້ເປັນພະຍານເພື່ອຄວາມຈິງຄ້າຍຄືກັນໃນປະເທດຝຣັ່ງ. ສ່ວນໃນສະຕະວັດທີ 16 ຜູ້ຕິດຕາມການປະຕິຮູບຄັ້ງໃຫຍ່ໄດ້ຖືກປະຫານຊີວິດດ້ວຍການທໍລະມານຢ່າງໂຫດຫ້ຽມ. ກະສັດ ແລະ ພວກຂຸນນາງ, ຜູ້ຍິງຕະກູນສູງ ແລະ ຍິງສາວທີ່ອ່ອນໂຍນ ພ້ອມດ້ວຍຜູ້ດີທັງຫຼາຍໄດ້ຊົມຊື່ນຍິນດີກັບຄວາມທຸກທໍລະມານຂອງຄົນທັງຫຼາຍທີ່ຖືກຂ້າເພາະຄວາມເຊື່ອທີ່ພວກເຂົາມີໃນພຣະເຢຊູ. ພວກຊາວຮູເກໂນ (Huguenots) ເປັນກຸ່ມຄົນຜູ້ກ້າຫານ; ພວກເຂົາໄດ້ຕໍ່ສູ້ເພື່ອສິດທິເຊິ່ງມະນຸດຖືວ່າສັກສິດທີ່ສຸດ, ແລ້ວກໍຕ້ອງລົ້ມຕາຍໃນສະໜາມຮົບຫຼັງການຕໍ່ສູ້ຢ່າງໜັກໜ່ວງ. ພວກໂປຣແຕັສຕັງຖືກນັບວ່າເປັນພວກນອກກົດໝາຍ, ມີການຕັ້ງຄ່າຫົວໃຫ້ຜູ້ເຊື່ອເຫຼົ່ານີ້, ພວກເຂົາຈຶ່ງຖືກຕາມລ່າຄືກັບສັດຮ້າຍ. *{GC 271.2}*

“ຄຣິສຕະຈັກໃນຖິ່ນແຫ້ງແລ້ງກັນດານ” ກໍຄືລູກຫຼານຄຣິສຕຽນບູຮານຈຳນວນໜ້ອຍທີ່ຍັງເຫຼືອຢູ່ໃນປະເທດຝຣັ່ງໃນສະຕະວັດທີ 18 ຜູ້ຫຼົບລີ້ຢູ່ຕາມສາຍພູທາງພາກໃຕ້; ຄົນເຫຼົ່ານີ້ຍັງຮັກສາຄວາມເຊື່ອສັດທາຂອງບັນພະບຸລຸດເອົາໄວ້. ໃນຂະນະທີ່ພວກເຂົາສ່ຽງຊີວິດເພື່ອພົບກັນໃນຍາມກາງຄືນຢູ່ຕາມພູ ຫຼື ແຄມຫ້ວຍໜອງຄອງບຶງທີ່ໂດດດ່ຽວ, ພວກເຂົາກໍຖືກທະຫານມ້າໄລ່ລ່າ ແລະ ຖືກລາກໄປເປັນ

[4] ສະກັອດ, *ຊີວິດຂອງນາໂປເລອົງ*, ເຫຼັ້ມ 1, ບົດ 17.

[5] ພຣະນິມິດ 1:9.

ທາດພາຍເຮືອຕະຫຼອດຊີວິດ. ຜູ້ບໍຣິສຸດທີ່ສຸດ, ມີຄຸນນະທຳຫຼາຍທີ່ສຸດ ແລະ ສະຫຼາດທີ່ສຸດຂອງຊາວ ຝຣັ່ງ ຖືກລ່າມໂສ້ຢ່າງທຸກທໍລະມານທ່າມກາງພວກໂຈນ ແລະ ພວກນັກລອບສັງຫານ.[6] ຄົນອື່ນໄດ້ ຮັບຄວາມເມດຕາຫຼາຍກວ່ານັ້ນ, ຄືໄດ້ຖືກຍິງຖິ້ມຢ່າງເລືອດເຢັນ ແລ້ວກໍລົ້ມຕາຍຂະນະທີ່ກຳລັງຄູ້ເຂົ່າ ອະທິຖານ ໂດຍບໍ່ມີກຳລັງ ຫຼື ອາວຸດເພື່ອຕໍ່ສູ້. ຊາຍຊະລາຫຼາຍຮ້ອຍຄົນ ພ້ອມດ້ວຍຜູ້ຍິງທີ່ບໍ່ມີທາງ ສູ້ ແລະ ເດັກນ້ອຍທີ່ບໍຣິສຸດ ຖືກຂ້າຖິ້ມໃນສະຖານທີ່ນະມັດສະການຂອງພວກເຂົາ. ຖ້າມີຜູ້ໃດໃນ ສະໄໝນັ້ນ ຍ່າງຜ່ານປ່າເຂົາທີ່ພວກຄຣິສຕຽນເຄີຍປະຊຸມກັນເປັນປະຈຳ ກໍຈະບໍ່ເປັນເລື່ອງແປກທີ່ຈະພົບ ເຫັນ “ສົບຄົນຕາຍນອນຢູ່ເທິງດິນ ຫຼື ແຂວນຕາມຕົ້ນໄມ້ທຸກ 3–5 ແມັດ.” ປະເທດຝຣັ່ງຖືກທຳລາຍ ດ້ວຍດາບ, ດ້ວຍມີດປະຫານ ແລະ ກອງໄຟປະຫານ ຈົນກາຍເປັນ “ທີ່ກັນດານອັນກວ້າງໃຫຍ່ ໄພສານ.” “ຄວາມໂຫດຮ້າຍເຫຼົ່ານີ້ບໍ່ໄດ້ເກີດຂຶ້ນໃນສະໄໝຍຸກມືດ . . . ແຕ່ໃນຍຸກທີ່ຮຸ່ງເຮືອງຂອງກະສັດ ຟຼຸຍສ໌ທີ 14. ເປັນຍຸກສະໄໝແຫ່ງວິທະຍາສາດ ແລະ ການສຶກສາ; [ໃນສະໄໝນັ້ນ] ບາດຫຼວງປະຈຳ ຣາຊສຳນັກ ແລະ ຕາມໂບດໃນນະຄອນຫຼວງລ້ອມແຕ່ມີການສຶກສາສູງ ແລະ ເວົ້າຈາລ່ຽນໄຫຼ ທັງ ສະແດງທ່າທີວ່າມີຄວາມອ່ອນນ້ອມ ແລະ ຄວາມເມດຕາ.”[7] *{GC 271.3}*

ແຕ່ທ່າມກາງຄວາມບາບຊົ່ວທັງຫຼາຍອັນມືດມົນທີ່ສຸດ ແລະ ຄວາມໂຫດຮ້າຍຂອງຜີມານທີ່ໜ້າຢ້ານ ທີ່ສຸດຕະຫຼອດປະຫວັດສາດ ແມ່ນການສັງຫານໝູ່ໃນວັນສະຫຼອງອັກຄະສາວົກບາຣະໂທໂລມາຍ. ເມື່ອ ຜູ້ໃດລະນຶກເຖິງເຫດການທີ່ກະທຳໄປຢ່າງຂີ້ຂາດແບບໝາລອບກັດ ແລະ ໂຫດຫ້ຽມທີ່ສຸດນັ້ນ ກໍຮູ້ສຶກ ໃຈສັ່ນສະຫຍອງຂວັນ. ກະສັດຂອງປະເທດຝຣັ່ງຖືກພວກບາດຫຼວງ ແລະ ພວກຜູ້ນຳຄຣິສຕະຈັກ ໂຣມຍຸຍົງໃຫ້ອະນຸມັດການກະທຳອັນໂຫດຮ້າຍນັ້ນ. ສຽງລະຄັງດັງຢູ່ຍາມທ່ຽງຄືນເປັນສັນຍານໃຫ້ລົງມື ຂ້າ. ພວກໂປຣແຕັສຕັງຫຼາຍພັນຄົນກຳລັງນອນຫຼັບຢູ່ໃນເຮືອນຊານຢ່າງສະຫງົບສຸກ ໂດຍ ໄວ້ວາງໃຈ ໃນສັກສີຂອງກະສັດທີ່ຈະໃຫ້ການຄຸ້ມຄອງປະຊາຊົນ, ແຕ່ຄົນເຫຼົ່ານີ້ກັບຖືກລາກອອກໄປໂດຍບໍ່ມີການ ເຕືອນ ແລະ ຖືກຂ້າຕາຍຢ່າງເລືອດເຢັນ. *{GC 272.1}*

ພຣະຄຣິສຊົງເປັນຜູ້ນຳປະຊາຊົນຂອງພຣະອົງທີ່ເບິ່ງບໍ່ເຫັນ ໃນຂະນະທີ່ພວກເຂົາອອກຈາກການ ເປັນທາດໃນປະເທດເອຢິບສັນໃດ ຊາຕານກໍເປັນຜູ້ນຳທີ່ເບິ່ງບໍ່ເຫັນ ທີ່ນຳຄົນຂອງມັນໃນວຽກງານຂ້າຄົນ ຍ້ອນຄວາມເຊື່ອສັນນັ້ນ. ການສັງຫານໝູ່ດຳເນີນໄປຢ່າງຕໍ່ເນື່ອງເຈັດວັນໃນນະຄອນປາຣີ ໂດຍສາມວັນ ທຳອິດແມ່ນໂຫດຮ້າຍທີ່ສຸດ ຈົນເກີນຄຳບັນລະຍາຍ. ແຕ່ບໍ່ແມ່ນວ່າມີການຂ້າຄົນສະເພາະໃນນະຄອນ ຫຼວງເທົ່ານັ້ນ, ກະສັດໄດ້ອອກຄຳສັ່ງພິເສດໃຫ້ມີການຂ້າພວກໂປຣແຕັສຕັງໃນທຸກແຂວງ ແລະ ທຸກ ເມືອງທີ່ພົບເຫັນ, ໂດຍບໍ່ຄຳນຶງເຖິງເພດ ຫຼື ອາຍຸ; ສະນັ້ນ, ເດັກອ່ອນຜູ້ບໍຣິສຸດ ແລະ ຊາຍຊະລາຜົມ ຫງອກກໍບໍ່ໄດ້ຮັບການຍົກເວັ້ນ. ທັງຊາວນາ ແລະ ຊຸນນາງ, ທັງແກ່ທັງໜຸ່ມ, ທັງແມ່ ແລະ ລູກ ກໍຖືກ ຂ້າຟັນໄປພ້ອມກັນ. ການສັງຫານນັ້ນ ສືບຕໍ່ເນື່ອງສອງເດືອນທົ່ວທັງປະເທດຝຣັ່ງ, ຈົນຄົນດີມີສິນທຳໃນ ບ້ານເມືອງເສຍຊີວິດເຖິງ 70,000 ຄົນ. *{GC 272.2}*

“ເມື່ອຂ່າວການສັງຫານໝູ່ໄປຮອດນະຄອນໂຣມ, ພວກບາດຫຼວງກໍຊື່ນຊົມຍິນດີຢ່າງໃຫຍ່ຫຼວງ. ພຣະຄາດີນັນແຫ່ງແຂວງໂລເຣນໃຫ້ລາງວັນ 1,000 ຫຼຽນແກ່ຜູ້ສົ່ງຂ່າວ; ມີການຍິງປືນໃຫຍ່ເພື່ອ ສະຫຼອງທີ່ປ້ອມ ຊັງ ແອນເຈໂລ; ລະຄັງໂບດທຸກແຫ່ງກໍດັງກັ້ງວານ; ມີການຈູດກອງໄຟສະຫຼອງຢ່າງ ສະຫວ່າງສະໄຫວ. ສ່ວນສັນຕະປາປາເກຼັກກໍຣີທີ 13 ພ້ອມດ້ວຍພວກພຣະຄາດີນັນ ແລະ ເຈົ້າໜ້າທີ່ ສູງຂອງຄຣິສຕະຈັກໂຣມ ພາກັນແຫ່ໄປທີ່ໂບດ ຊັງ ຫຼຸຍສ໌; ເມື່ອໄປຮອດແລ້ວ ພຣະຄາດີນັນແຫ່ງ ແຂວງໂລເຣນໄດ້ຂັບຮ້ອງ*ເພງສັນເສີນພຣະເຈົ້າ*; . . . ມີການຫຼອມຫຼຽນເພື່ອສະເຫຼີມສະຫຼອງການສັງຫານ

[6] ເບິ່ງ ໄວລີ, ເຫຼັ້ມ 22, ບົດ 6.

[7] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 22, ບົດ 7.

ໝູ່ດັ່ງກ່າວ; ນອກຈາກນັ້ນ, ນັກແຕ້ມຮູບຊື່ ວາຊາຣີ (Vasari) ໄດ້ແຕ້ມຮູບສາມແຜ່ນເພື່ອລະນຶກເຖິງ ເຫດການໃນຄັ້ງນັ້ນ; ຮູບທີໜຶ່ງ ແມ່ນການໂຈມຕີນາຍພົນເຮືອເອກຊາວໂປຣແຕັສຕັງ, ຮູບທີສອງ ແມ່ນ ກະສັດວາງແຜນເພື່ອການສັງຫານໝູ່ ແລະ ຮູບທີສາມ ແມ່ນການສັງຫານໝູ່ນັ້ນເອງ; ຮູບເຫຼົ່ານີ້ ຍັງສາມາດເບິ່ງໄດ້ໃນສຳນັກວາຕິກັນ. ສັນຕະປາປາເກຼັກກໍຣີສົ່ງກຸຫຼາບຄຳໃຫ້ແກ່ກະສັດຊານສ໌; ຕໍ່ ມາຫຼັງຈາກການສັງຫານໝູ່ສີ່ເດືອນ . . . ເພິ່ນໄດ້ຟັງຄຳເທດສະໜາຂອງບາດຫຼວງຊາວຝຣັ່ງ . . . ທີ່ກ່າວ ເຖິງ 'ມື້ອັນເຕັມໄປດ້ວຍຄວາມສຸກກະເສີມຍິນດີ ເມື່ອພຣະບິດາເຈົ້າ [ໝາຍເຖິງສັນຕະປາປາ] ໄດ້ຮັບ ຂ່າວ ແລ້ວສະເດັດໄປໂບດເພື່ອຂອບຄຸນພຣະເຈົ້າ ແລະ ນັກບຸນ ຊັງ ຫຼຸຍສ໌.'"[8] *{GC 272.3}*

ຕໍ່ສູ້ພຣະຄຳພີ

ຈິດໃຈແບບດຽວກັນທີ່ຍຸຍົງໃຫ້ເກີດການສັງຫານໝູ່ໃນວັນສະຫຼອງອັກຄະສາວົກບາຣະໂທໂລມາຍ ເປັນຈິດໃຈດຽວກັນທີ່ກໍ່ເຫດການອັນໂຫດຮ້າຍໃນການປະຕິວັດຝຣັ່ງ. ມີການປະກາດວ່າພຣະເຢຊູຄຣິສ ເປັນຜູ້ຫຼອກລວງ; ພວກຊາວຝຣັ່ງທີ່ບໍ່ເຊື່ອພຣະເຈົ້າຮ້ອງເປັນສຽງດຽວກັນວ່າ, "ທຸບໃຫ້ມັນຕາຍເສຍ," ໂດຍ ພວກເຂົາໝາຍເຖິງພຣະຄຣິສ. ການໝິ່ນປະໝາດທີ່ທ້າທາຍສະຫວັນ ແລະ ຄວາມຊົ່ວຮ້າຍທີ່ໜ້າ ກຽດຊັງໄດ້ເກີດຂຶ້ນຄວບຄູ່ກັນໄປ; ຄົນຕ່ຳຊ້າທີ່ສຸດ ຄືຄົນໃຈມານທີ່ປ່ອຍຕົວເຮັດການໂຫດຮ້າຍ ແລະ ຄວາມຊົ່ວພັດຖືກຍົກຍ້ອງເຊີດຊູ. ໃນທັງໝົດນີ້, ຊາຕານແມ່ນຜູ້ທີ່ໄດ້ຮັບກຽດສູງສຸດ; ໃນຂະນະທີ່ ພຣະຄຣິສເໝືອນກັບຖືກຄຶງໄວ້ທີ່ໄມ້ກາງແຂນ ໂດຍທີ່ປະຊາຊົນຢຽບຢ້ຳພຣະລັກສະນະຂອງພຣະອົງ ອັນ ປະກອບດ້ວຍຄວາມຈິງ, ຄວາມບໍຣິສຸດ ແລະ ຄວາມຮັກທີ່ບໍ່ເຫັນແກ່ຕົວ. *{GC 273.1}*

"ຈະມີສັດຮ້າຍອອກມາຈາກເຫວເລິກ ແລະ ຈະຕໍ່ສູ້ພວກເພິ່ນ. ສັດຮ້າຍນັ້ນຈະຊະນະພວກ ເພິ່ນ ແລະ ຂ້າພວກເພິ່ນເສຍ." ອຳນາດແຫ່ງອຸດົມການທີ່ເຊື່ອວ່າບໍ່ມີພຣະເຈົ້າ ໄດ້ປົກຄອງປະເທດຝຣັ່ງ ໃນຊ່ວງການປະຕິວັດ ແລະ ໃນຍຸກສະໄໝທີ່ຄວາມໂຫດຫ້ຽມສະຫຍອງຂວັນຄອງເມືອງ; ອຸດົມການນີ້ ໄດ້ຕໍ່ສູ້ພຣະເຈົ້າ ແລະ ພຣະຄຳອັນສັກສິດຂອງພຣະອົງຢ່າງທີ່ໂລກບໍ່ເຄີຍເຫັນມາກ່ອນ. ກອງປະຊຸມ ແຫ່ງຊາດໄດ້ປະກາດໃຫ້ຍົກເລີກການນະມັດສະການພຣະເຈົ້າ; ມີການຮວບຮວມພຣະຄຳພີມາເຜົາຖິ້ມ ໃນກາງແຈ້ງດ້ວຍທ່າທີດູຖູກຢຽດຢາມ. ພຣະບັນຍັດຂອງພຣະເຈົ້າຖືກຢຽບຢ້ຳໃຕ້ຕີນ. ມີການປະກາດ ຍົກເລີກພິທີກຳ ແລະ ການປະຕິບັດຕາມຄຳສອນຂອງພຣະຄຳພີ. ວັນພັກຜ່ອນປະຈຳອາທິດໄດ້ ຖືກຍົກເລີກ ແລະ ມີການຕັ້ງເອົາທຸກສິບວັນມາແທນທີ່, ໃຫ້ເປັນວັນແຫ່ງການເຮຮາ ແລະ ການ ໝິ່ນປະໝາດ; ມີການຫ້າມເຮັດພິທີບັບຕິສະມາ ຫຼື ພິທີມະຫາສະໜິດ; ມີການຕິດປ້າຍປະກາດບ່ອນ ຝັງສົບຢ່າງເດັ່ນຊັດ ໂດຍມີຂໍ້ຄວາມວ່າ ຄວາມຕາຍເປັນພຽງການນອນຫຼັບຕະຫຼອດການ. *{GC 273.2}*

ແທນທີ່ຈະເຊື່ອວ່າ ຄວາມຢຳເກງພຣະເຈົ້າເປັນຈຸດເລີ່ມຕົ້ນແຫ່ງປັນຍາ ພວກເຂົາພັດປະກາດ ວ່າ ຄວາມຢຳເກງພຣະເຈົ້າເປັນຈຸດເລີ່ມຕົ້ນແຫ່ງຄວາມໂງ່ຈ້າ. ມີການຫ້າມການຂາບໄຫວ້ນະມັດສະການ ທຸກຢ່າງ ຍົກເວັ້ນເສລີພາບ ແລະ ປະເທດຊາດ. "ເຈົ້າຄະນະຝ່າຍລັດຖະທຳມະນູນແຫ່ງນະຄອນ ປາຣີ[9] ໄດ້ຖືກນຳອອກມາເພື່ອສະແດງບົດບາດສຳຄັນ ໃນລະຄອນຕະຫຼົກທີ່ໜ້າຍາບຄາຍ ແລະ ເປັນຕາໜ້າອັບອາຍທີ່ສຸດເທົ່າທີ່ເຄີຍມີການສະແດງຕໍ່ສາຍຕາຜູ້ຕາງໜ້າແຫ່ງຊາດ. . . . ລາວອອກມາ ພ້ອມກັບຂະບວນແຫ່ ແລ້ວປະກາດໃຫ້ກອງປະຊຸມແຫ່ງຊາດຟັງວ່າ ສາສະໜາທີ່ລາວສອນມາຫຼາຍ ປີນັ້ນ ເປັນພຽງແຕ່ການຫຼອກລວງຂອງພວກບາດຫຼວງ ແລະ ບໍ່ມີພື້ນຖານມາຈາກປະຫວັດສາດ ຫຼື ຫຼັກ

[8] ເຮນຣີ ໄວທ໌ (Henry White), *ການສັງຫານໝູ່ໃນວັນສະຫຼອງອັກຄະສາວົກບາຣະໂທໂລມາຍ*, ບົດ 14, ວັກ 34.

[9] ຄຳວ່າ "ຝ່າຍລັດຖະທຳມະນູນ" ໝາຍເຖິງເຈົ້າຄະນະ ແລະ ບາດຫຼວງທີ່ສາບານຕົນຕໍ່ກົດໝາຍປີ 1790 ທີ່ເອົາຄຣິສຕະຈັກ ຝຣັ່ງໄປຢູ່ໃຕ້ການຄວບຄຸມຂອງລັດ; ສັນຕະປາປາບໍ່ຮັບຮອງການແຕ່ງຕັ້ງເຫຼົ່ານັ້ນ.

ສັດຈະທຳ. ລາວຢືນຢັນຢ່າງແຂງຂັນ ແລະ ເດັດຂາດວ່າບໍ່ມີພຣະເຈົ້າ; ເຖິງແມ່ນວ່າລາວເຄີຍໄດ້ຮັບ ການເຈີມຕັ້ງເພື່ອນະມັດສະການພຣະອົງ, ແຕ່ນັບຕັ້ງແຕ່ມື້ນັ້ນເປັນຕົ້ນໄປ ລາວຈະອຸທິດຕົນເພື່ອເຊີດຊູ ເສລີພາບ, ຄວາມສະເໝີພາບ, ຄຸນນະທຳ ແລະ ສິນລະທຳ. ຈາກນັ້ນ, ລາວກໍເອົາເຄື່ອງປະຈຳຕຳແໜ່ງ ເຈົ້າຄະນະວາງໄວ້ເທິງໂຕ໊ະ ແລ້ວປະທານກອງປະຊຸມກໍເຂົ້າໄປກອດລາວ ເພື່ອສະແດງຄວາມເປັນພີ່ນ້ອງ. ມີບາດຫຼວງທີ່ປະຖິ້ມຄວາມເຊື່ອຫຼາຍຄົນໄດ້ເຮັດຕາມແບບຢ່າງຂອງເຈົ້າຄະນະຜູ້ນີ້."[10] *{GC 274.1}*

ທ້າທາຍພຣະເຈົ້າຢ່າງເປີດເຜີຍ

"ຄົນທົ່ວໂລກ ຕ່າງກໍຈະດີໃຈທີ່ພະຍານທັງສອງນີ້ຕາຍໄປແລ້ວ ພວກເຂົາຈະສະເຫຼີມສະຫຼອງ ແລະ ສົ່ງຂອງຂວັນໃຫ້ກັນແລະກັນ ເພາະຜູ້ປະກາດພຣະທຳທັງສອງນີ້ ໄດ້ນຳຄວາມທໍລຸທຸກຢ່າງໜັກມາສູ່ ມະນຸດທັງຫຼາຍ." ປະເທດຝຣັ່ງໄດ້ປະຕິເສດຄວາມເຊື່ອໃນພຣະເຈົ້າ ແລະ ໄດ້ປິດປາກພະຍານທັງສອງ ຂອງພຣະອົງທີ່ຄອຍຕັກເຕືອນພວກເຂົາ. ພຣະຄຳແຫ່ງຄວາມຈິງນອນຕາຍຢູ່ໃນຖະໜົນຫົນທາງທົ່ວ ປະເທດ, ສ່ວນຜູ້ທີ່ກ້າດຊັງຂໍ້ຈຳກັດ ແລະ ຂໍ້ບັງຄັບຂອງພຣະບັນຍັດກໍມີຄວາມເບີກບານມ່ວນຊື່ນ. ຄົນ ທັງຫຼາຍພາກັນທ້າທາຍພຣະເຈົ້າແຫ່ງສະຫວັນຢ່າງເປີດເຜີຍ. ເຊັ່ນດຽວກັບຄົນບາບໃນສະໄໝບູຮານ, ພວກເຂົາຮ້ອງວ່າ: "ພຣະເຈົ້າບໍ່ຫ່ອນຈະຮູ້ເຫັນ, ພຣະເຈົ້າອົງສູງສຸດຈະບໍ່ຮູ້ເລື່ອງຫຍັງດອກ."[11] *{GC 274.2}*

ມີບາດຫຼວງຝ່າຍລະບົບໃໝ່ໝິ່ນປະໝາດພຣະເຈົ້າຢ່າງໜ້າດ້ານຈົນບໍ່ໜ້າເຊື່ອວ່າ: "ພຣະເຈົ້າເອີຍ, ຖ້າຫາກວ່າມຶງມີຈິງ ຈົ່ງລຸກຂຶ້ນ ແລະ ປ້ອງກັນນາມຊື່ຂອງມຶງ. ກູຂໍທ້າທາຍມຶງເດີ! ມຶງຍັງມິດງຽບ ຢູ່; ມຶງບໍ່ກ້າສົ່ງຟ້າຜ່າລົງມາດອກ. ຫຼັງຈາກນີ້ແມ່ນຜູ້ໃດຈະເຊື່ອວ່າມຶງມີຈິງ?"[12] ຖ້ອຍຄຳເຫຼົ່ານີ້ເປັນພຽງ ການສະທ້ອນຄຳທ້າທາຍຂອງກະສັດຟາໂຣທີ່ກ່າວວ່າ: "ອົງພຣະຜູ້ເປັນເຈົ້າແມ່ນໃຜ, ເປັນຫຍັງເຮົາຈະ ຕ້ອງຟັງ?" "ເຮົາບໍ່ຮູ້ຈັກອົງພຣະຜູ້ເປັນເຈົ້າ." (ອົບພະຍົບ 5:2 LO2012). *{GC 274.3}*

"ຄົນໂງ່ຄິດຢູ່ໃນໃຈຂອງຕົນວ່າ, 'ໂລກນີ້ບໍ່ມີພຣະເຈົ້າ.'" (ເພງສັນລະເສີນ 14:1). ແຕ່ພຣະເຈົ້າ ຊົງປະກາດກ່ຽວກັບຜູ້ທີ່ປິດເປືອນຄວາມຈິງວ່າ: "ຄວາມໂງ່ຂອງເຂົານັ້ນ ຈະປາກົດແຈ້ງແກ່ຄົນທັງ ປວງ." (2 ຕີໂມທຽວ 3:9). ບໍ່ດົນຫຼັງຈາກທີ່ປະເທດຝຣັ່ງໄດ້ປະຕິເສດການນະມັດສະການພຣະເຈົ້າ ອົງສູງສຸດຜູ້ຊົງພຣະຊົນຢູ່ຕະຫຼອດໄປ, ພວກເຂົາກໍພາກັນເສື່ອມຊາມລົງ ຈົນຂາບໄຫວ້ສິ່ງທີ່ຕາເຫັນ ແທນການນະມັດສະການພຣະເຈົ້າ ໂດຍພວກເຂົາຂາບໄຫວ້ເທບທິດາແຫ່ງເຫດຜົນໃນຮູບແບບຍິງເຈ້ຍ ສຳລານ. ຊ້ຳຮ້າຍ, ພິທີດັ່ງກ່າວເກີດຂຶ້ນທ່າມກາງຜູ້ຕາງໜ້າແຫ່ງຊາດ ໂດຍຜູ້ມີອຳນາດສູງສຸດຝ່າຍ ການປົກຄອງ ແລະ ຝ່າຍນິຕິບັນຍັດ! ມີນັກປະຫວັດສາດຜູ້ໜຶ່ງບັນທຶກໄວ້ວ່າ: "ໜຶ່ງໃນພິທີທີ່ເກີດຂຶ້ນ ໃນເວລານັ້ນ ມີຄວາມໂດດເດັ່ນເພາະຄວາມໂງ່ຈ້າ ແລະ ການໝິ່ນປະໝາດ. ປະຕູຫ້ອງປະຊຸມຖືກ ເປີດອອກ ແລະ ມີຄະນະນັກດົນຕີເດີນເຂົ້າມາກ່ອນ ຕາມດ້ວຍພວກເຈົ້າໜ້າທີ່ຝ່າຍປົກຄອງເມືອງທີ່ ແຫ່ຂະບວນເຂົ້າມາຢ່າງສະຫງ່າຜ່າເຜີຍ; ພວກເຂົາຮ້ອງເພງສັນລະເສີນເສລີພາບ ແລະ ນຳພາຜູ້ທີ່ ພວກເຂົາຈະນະມັດສະການ ຄືແມ່ຍິງຄົນໜຶ່ງໃສ່ຜ້າມ່ານປິດໜ້າ, ຜູ້ທີ່ພວກເຂົາເອີ້ນວ່າເປັນເທບທິດາ ແຫ່ງເຫດຜົນ. ເມື່ອແມ່ຍິງຜູ້ນັ້ນຖືກນຳໄປຂ້າງໜ້າແລ້ວ ພວກເຂົາກໍເຮັດພິທີຖອດຜ້າມ່ານອອກດ້ວຍ ທ່າທີທີ່ໜ້າຊົມເຊີຍ; ເມື່ອແມ່ຍິງຄົນນັ້ນມາຢືນຢູ່ເບື້ອງຂວາຂອງປະທານກອງປະຊຸມ ທຸກຄົນສັງເກດ ວ່າເປັນນັກເຕັ້ນໃນໂຮງລະຄອນ. . . . ຜູ້ຍິງຄົນນີ້ຖືກນັບວ່າ ເປັນຕົວແທນທີ່ເໝາະສົມທີ່ສຸດຂອງເທບທິດາ

[10] ສະກັອດ, *ຊີວິດຂອງປາໂປເລອົງ*, ເຫຼັ້ມ 1, ບົດ 17.

[11] ເພງສັນລະເສີນ 73:11 ສະບັບລາວບູຮານ.

[12] ລາເຄເທວ (Lacretelle), *ປະຫວັດສາດ*, ເຫຼັ້ມ 11, ໜ້າ 309; ແລະໃນ ເຊ ອາຊີບານ ອາລີຊັນ, *ປະຫວັດສາດຂອງ ເອີຣົບ*, ເຫຼັ້ມ 1, ບົດ 10.

ແຫ່ງເຫດຜົນທີ່ພວກເຂົານະມັດສະການ ແລ້ວກອງປະຊຸມແຫ່ງຊາດຝຣັ່ງກໍພາກັນຖວາຍກຽດແກ່ນາງ ຢ່າງເປີດເຜີຍ." *{GC 275.1}*

"ພິທີກຳທີ່ໂຮ້ສາລະ ແລະ ຜິດສິນທຳນັ້ນ ໄດ້ກາຍເປັນກະແສນິຍົມ; ມີການຕັ້ງເທບທິດາແຫ່ງ ເຫດຜົນໃນເມືອງຕ່າງ ໆ ທົ່ວປະເທດ ໂດຍສະເພາະແມ່ນໃນສະຖານທີ່ທີ່ຊາວເມືອງຕ້ອງການສະແດງໃຫ້ ເຫັນວ່າ ພວກເຂົາບໍ່ໄດ້ນ້ອຍໜ້າແກນນຳຂອງຝ່າຍປະຕິວັດ."[13] *{GC 275.2}*

ເຈົ້າໜ້າທີ່ທີ່ແນະນຳການນະມັດສະການເທບທິດາແຫ່ງເຫດຜົນກ່າວວ່າ: "ສະມາຊິກສະພາເອີຍ! ຄວາມຄັ່ງໄຄ້ຫຼົ່ງໄຫຼໄດ້ປະລາໄຊ ແລະ ຖືກແທນທີ່ໂດຍການໃຊ້ເຫດຜົນແລ້ວເດີ; ຍ້ອນວ່າຕາຟາງມົວຂອງ ຄວາມງົມງວາຍ ບໍ່ສາມາດສູ້ແສງສະຫວ່າງອັນເຈີດຈ້າໄດ້. ວັນນີ້ມະຫາຊົນໄດ້ມາປະຊຸມກັນພາຍໃຕ້ວົງ ໂຄ້ງມະຫຶມາຍຸກໂກທິກ[14] ນັ້ນ ເຊິ່ງເປັນຄັ້ງທຳອິດທີ່ສະຖານທີ່ແຫ່ງນັ້ນໄດ້ຍິນສຽງກ້ອງວານເຖິງຄວາມຈິງ, ເພາະຢູ່ທີ່ນັ້ນ, ຊາວຝຣັ່ງໄດ້ສະຫຼອງການນະມັດສະການທີ່ແທ້ຈິງພຽງຢ່າງດຽວ ກໍຄື ການນະມັດສະການ ເສລີພາບ ແລະ ເທບທິດາແຫ່ງເຫດຜົນ. ທີ່ນັ້ນພວກເຮົາໄດ້ຮ່າງຄວາມໃຝ່ຝັນໃຫ້ມີສາທາລະນະລັດ ທີ່ມີກຳລັງທະຫານເຂັ້ມແຂງ; ທີ່ນັ້ນພວກເຮົາໄດ້ປະຖິ້ມຮູບປັ້ນທີ່ບໍ່ມີຊີວິດ ເພື່ອຮັບເອົາເທບທິດາແຫ່ງ ເຫດຜົນ, ເປັນຮູບເຄົາລົບທີ່ມີຊີວິດ ແລະ ເປັນຜົນງານຊິ້ນເອກຂອງທຳມະຊາດ."[15] *{GC 275.3}*

ເມື່ອເທບທິດາຖືກນຳເຂົ້າໄປໃນກອງປະຊຸມ, ຜູ້ບັນລະຍາຍໄດ້ຈັບມືນາງ ແລ້ວຫັນໄປກ່າວແກ່ຄົນ ທີ່ປະຊຸມກັນຢູ່ນັ້ນວ່າ: "ມະນຸດເອີຍ, ຈົ່ງເຊົາສັ່ນສະເທືອນຕໍ່ໜ້າພຣະເຈົ້າທີ່ມີແຕ່ສຽງຟ້າຮ້ອງແຕ່ບໍ່ມີ ອຳນາດ, ຄືພຣະເຈົ້າທີ່ເກີດມາຈາກຄວາມຢ້ານກົວຂອງພວກທ່ານ. ຕໍ່ໄປນີ້ຢ່າໄດ້ຮັບຮູ້ພຣະເຈົ້າອື່ນ ໃດນອກຈາກເທບທິດາແຫ່ງເຫດຜົນ. ຂ້າພະເຈົ້າຂໍນຳສະເໜີໃຫ້ພວກທ່ານເບິ່ງຮູບກາຍທີ່ສະຫງ່າງາມ ແລະ ບໍຣິສຸດຂອງນາງ; ຖ້າພວກທ່ານຕ້ອງການມີຮູບເຄົາລົບ ຈົ່ງບູຊາແຕ່ຮູບເຊັ່ນນີ້." [ຈາກນັ້ນເພີ່ນກໍ ປ່ອຍຜ້າມ່ານລົງ ແລະ ຮ້ອງຂຶ້ນວ່າ:][16] "ຜ້າມ່ານແຫ່ງເຫດຜົນເອີຍ ຈົ່ງຂາບລົງຕໍ່ໜ້າສະພາອັນຊົງ ກຽດແຫ່ງເສລີພາບ!" *{GC 276.1}*

"ຫຼັງຈາກປະທານກອງປະຊຸມກອດເທບທິດາແລ້ວ, ນາງກໍຂຶ້ນນັ່ງເທິງລົດຂະບວນແຫ່ ແລ້ວ ຖືກນຳພາທ່າມກາງມະຫາຊົນໄປຍັງໂບດວິຫານແຫ່ງນໍເຕີດາມ (Notre Dame) ເພື່ອແທນທີ່ ພຣະເຈົ້າ. ເມື່ອໄປຮອດວິຫານ ນາງໄດ້ຖືກຍົກຂຶ້ນຢູ່ເທິງແທ່ນບູຊາທີ່ສູງສຸດ ເພື່ອຮັບການເຄົາລົບນັບຖື ຈາກທຸກຄົນທີ່ຢູ່ທີ່ນັ້ນ."[17] *{GC 276.2}*

ຫຼັງຈາກນີ້ບໍ່ດົນ, ມີການເຜົາພຣະຄຳພີໃນທີ່ສາທາລະນະ. ມີຄັ້ງໜຶ່ງ "ສະມາຊິກສະມາຄົມ ພິພິທະພັນ" ໄດ້ເຂົ້າໄປໃນຫ້ອງປະຊຸມຝ່າຍການປົກຄອງເມືອງ ພ້ອມກັບຮ້ອງວ່າ, "*ເຫດຜົນຈົ່ງ ຈະເລີນ!*" ພວກເຂົາຖືເອົາໄມ້ຍາວທ່ອນໜຶ່ງທີ່ມີໜັງສືຫຼາຍເຫຼັ້ມສຸມໄວ້ທີ່ປາຍ, ໜັງສືເຫຼົ່ານີ້ຖືກເຜົາ ໄໝ້ໄປເຄິ່ງໜຶ່ງ, ມີທັງຄູ່ມືອະທິຖານ, ຄູ່ມືປະຈຳພິທີສິນລະນິກ ແລະ ພຣະຄຳພີເດີມກັບພຣະຄຳພີ ໃໝ່. ປະທານທີ່ປະຊຸມກ່າວວ່າ: "ຄວາມໂງ່ຈ້າທັງຫຼາຍທີ່ໜັງສືເຫຼົ່ານີ້ໄດ້ຍຸຍົງໃຫ້ມະນຸດສະໂລກກະທຳ ນັ້ນ ໄດ້ຖືກສັ່ງເວີຍໃນກອງໄຟນີ້."[18] *{GC 276.3}*

---

[13] ສະກັອດ, ເຫຼັ້ມ 1, ບົດ 17.

[14] ໝາຍເຖິງສະຖາປັດຕະຍະກຳຍຸກໂກທິກ.

[15] ແອມ. ເອ. ເທຍ (M. A. Thiers), *ປະຫວັດສາດຂອງການປະຕິວັດຝຣັ່ງ*, ເຫຼັ້ມ 2, ໜ້າ 370, 371.

[16] ຂໍ້ຄວາມໃນວົງລ່ຽມໄດ້ຄັດລອກມາຈາກຕົ້ນສະບັບຂອງ ອາລີຊັນ ທີ່ອ້າງອີງຂ້າງລຸ່ມ.

[17] ອາລີຊັນ (Alison), ເຫຼັ້ມ 1, ບົດ 10.

[18] ໜັງສືພິມ *Journal of Paris*, 1793, ສະບັບທີ 318. ອ້າງອີງໃນ ບູເຊດຣູ, *ຮວບຮວມປະຫວັດລັດຖະສະພາ*, ເຫຼັ້ມ 30, ໜ້າ 200, 201.

ຜົນລັບຂອງການຕໍ່ຕ້ານພຣະຄຳພີ

ລະບອບສັນຕະປາປາໄດ້ເລີ່ມຕົ້ນວຽກງານ ເຊິ່ງອຸດົມການທີ່ເຊື່ອວ່າບໍ່ມີພຣະເຈົ້າໄດ້ສານຕໍ່ຈົນສຳເລັດ. ນະໂຍບາຍຂອງຄຣິສຕະຈັກໂຣມໄດ້ປູທາງໃນດ້ານສັງຄົມ, ການເມືອງ ແລະ ສາສະໜາ, ເຊິ່ງເປັນເຫດທີ່ເລັ່ງລັດໃຫ້ປະເທດຝຣັ່ງໄປເຖິງຄວາມພິນາດ. ເມື່ອນັກປະຫວັດສາດຂຽນເຖິງຄວາມຮ້າຍກາດຂອງການປະຕິວັດ, ພວກເຂົາມັກກ່າວວ່າ ຄວາມໂຫດຮ້າຍເຫຼົ່ານັ້ນເກີດຈາກກະສັດ ແລະ ຈາກຄຣິສຕະຈັກ. ແຕ່ຖ້າຈະກ່າວຢ່າງເປັນທຳແລ້ວ ແມ່ນຄຣິສຕະຈັກທີ່ເປັນເຫດ. ລະບອບສັນຕະປາປາໄດ້ປັ່ນຫົວບັນດາກະສັດໃຫ້ຕໍ່ສູ້ຂະບວນການປະຕິຮູບ, ໃຫ້ຖືວ່ານັກປະຕິຮູບນັ້ນເປັນສັດຕູຕໍ່ບັນລັງ, ເປັນອັນຕະລາຍຕໍ່ສັນຕິພາບ ແລະ ຄວາມເປັນປຶກແຜ່ນຂອງປະເທດຊາດ. ມັນເປັນຄວາມສະຫຼາດຂອງຄຣິສຕະຈັກໂຣມ ທີ່ໃຫ້ການກ່ຽວຂ້ໍທີ່ໂຫດຫ້ຽມທີ່ສຸດນັ້ນມາຈາກຝ່າຍກະສັດ. {GC 276.4}

ພຣະຄຳພີຖືກນຳໄປເຜີຍແຜ່ທີ່ໃດ ແນວຄິດເລື່ອງເສລີພາບກໍຕາມໄປທີ່ນັ້ນ ເພາະທີ່ໃດມີການຮັບເອົາຂ່າວປະເສີດ ຈິດໃຈຂອງຄົນທີ່ນັ້ນກໍຈະຕື່ນຂຶ້ນ. ປະຊາຊົນເລີ່ມແກ້ໄສ້ທີ່ມັດພວກເຂົາຢູ່ໃນສະພາບທີ່ໂງ່ຈ້າ, ງົມງວາຍ ແລະ ໃຊ້ຊີວິດໃນຄວາມຊົ່ວ. ພວກເຂົາເລີ່ມຄິດ ແລະ ປະຕິບັດຕົວໃຫ້ສົມກັບການເປັນມະນຸດ. ກະສັດທັງຫຼາຍເຫັນແລ້ວກໍໃຈສັ່ນ ເພາະຢ້ານວ່າອຳນາດຜະເດັດການຂອງຕົນຈະໄດ້ຮັບຜົນກະທົບ. {GC 277.1}

ຄຣິສຕະຈັກໂຣມບໍ່ໄດ້ລໍຊ້າທີ່ຈະຍຸຍົງກະສັດທີ່ຢ້ານກົວເຫຼົ່ານັ້ນໃຫ້ໂກດຮ້າຍ. ໃນປີ 1525 ສັນຕະ-ປາປາກ່າວຕໍ່ຜູ້ສຳເລັດຣາຊການແທນກະສັດຂອງປະເທດຝຣັ່ງວ່າ: “ກະແສນິຍົມບ້າ ໆ ນີ້ [ຂອງພວກໂປຣແຕັສຕັງ] ຈະບໍ່ພຽງແຕ່ເຮັດໃຫ້ສາສະໜາສັບສົນ ແລະ ທຳລາຍສາສະໜາເທົ່ານັ້ນ, ແຕ່ຈະທຳລາຍບັນດາອຳນາດການປົກຄອງ, ຍົດຖາບັນດາສັກ, ກົດໝາຍ, ລະດັບຊັ້ນໃນສັງຄົມ ແລະ ຕຳແໜ່ງທັງໝົດໄປດ້ວຍ.”[19] ຕໍ່ມາບໍ່ເທົ່າໃດປີ, ທູດຂອງສັນຕະປາປາໄດ້ເຕືອນກະສັດວ່າ: “ຝ່າບາດເອີຍ, ຢ່າໄດ້ຫຼົງກົນເລີຍ. ພວກໂປຣແຕັສຕັງຈະກໍ່ຄວາມວຸ້ນວາຍໃນບ້ານເມືອງ ແລະ ໃນລະບຽບວິໄນທາງສາສະໜາ. . . . ບັນລັງກະສັດສູງອັນຕະລາຍຫຼາຍພໍ ໆ ກັບແທ່ນບູຊາຂອງໂບດ. . . . ການນຳສາສະໜາໃໝ່ເຂົ້າມາກໍຈະນຳໄປສູ່ການປົກຄອງແບບໃໝ່ຢ່າງຫຼີກລ່ຽງບໍ່ໄດ້.”[20] ສ່ວນນັກສາສະໜາສາດກໍອ້າໄສອະຄະຕິຂອງປະຊາຊົນ ເພື່ອປະກາດວ່າຄຳສອນຂອງພວກໂປຣແຕັສຕັງນັ້ນ “ເປັນການລໍ້ລວງຜູ້ຄົນໃຫ້ຫຼົງໄປຕາມເລື່ອງໃໝ່ ໆ ທີ່ບໍ່ເປັນປະໂຫຍດ, ທັງເຮັດໃຫ້ປະຊາຊົນບໍ່ສະແດງຄວາມເຄົາລົບຮັກທີ່ພວກເຂົາຄວນມີຕໍ່ກະສັດ; ນອກຈາກນັ້ນ, ຍັງທຳລາຍທັງລັດ ແລະ ຄຣິສຕະຈັກດ້ວຍ.” ດັ່ງນັ້ນ, ຄຣິສຕະຈັກໂຣມຈຶ່ງຍຸຍົງໃຫ້ປະເທດຝຣັ່ງຕໍ່ສູ້ກັບຂະບວນການປະຕິຮູບຈົນສຳເລັດ. “ທຳອິດທີ່ມີການຊັກດາບອອກມາກົດຂີ່ຂົ່ມເຫັງໃນປະເທດຝຣັ່ງ ກໍເພື່ອປົກປ້ອງບັນລັງ, ປົກປັກຮັກສາບັນດາຊຸນນາງ ແລະ ຮັກສາກົດໝາຍ.”[21] {GC 277.2}

ບັນດາຜູ້ປົກຄອງແຜ່ນດິນບໍ່ໄດ້ຄາດຄິດວ່າ ນະໂຍບາຍເຫຼົ່ານັ້ນຈະສົ່ງຜົນຢ່າງຮ້າຍແຮງພຽງໃດ. ຖ້າປະຊາຊົນມີໂອກາດຮັບເອົາຄຳສອນຂອງພຣະຄຳພີ ພວກເຂົາກໍຈະໄດ້ຮັບເອົາຫຼັກການຂອງຄວາມຍຸຕິທຳ, ການຮູ້ຈັກບັງຄັບຕົນ, ຄວາມຈິງ, ຄວາມສະເໝີພາບ ແລະ ຄວາມເມດຕາ ເຊິ່ງເປັນພື້ນຖານສຳຄັນຂອງຄວາມຈະເລີນຮຸ່ງເຮືອງຂອງປະເທດຊາດ. “ຄວາມຊອບທຳເຮັດໃຫ້ຊາດຍິ່ງໃຫຍ່.” ດ້ວຍວ່າ “ຄວາມຍຸຕິທຳພາໃຫ້ການປົກຄອງປະເທດເຂັ້ມແຂງ.” (ສຸພາສິດ 14:34; 16:12). “ຜົນຂອງຄວາມຊອບທຳຈະເປັນສັນຕິພາບ ແລະ ຜົນຂອງຄວາມຊອບທຳຄືຄວາມສະຫງົບ ແລະ ຄວາມວາງໃຈເປັນນິດ.” (ເອຊາຢາ

[19] ຈີ. ເດ ເຟລີສ (G. de Félice), *ປະຫວັດໂປຣແຕັສຕັງໃນປະເທດຝຣັ່ງ*, ເຫຼັ້ມ 1, ບົດ 2, ວັກ 8.

[20] ໂດບິນເຍ (D’Aubigné), *ປະຫວັດການປະຕິຮູບສາສະໜາໃນເອີຣົບສະໄໝຄາວິນ*, ເຫຼັ້ມ 2, ບົດ 36.

[21] ໄວລີ (Wylie), ເຫຼັ້ມ 13, ບົດ 4.

32:17 TKJV). ຜູ້ທີ່ຮັກສາພຣະບັນຍັດຂອງພຣະເຈົ້າ ກໍຈະເຄົາລົບ ແລະ ປະຕິບັດຕາມກົດໝາຍ ບ້ານເມືອງ. ຜູ້ທີ່ຢຳເກງພຣະເຈົ້າຈະໃຫ້ກຽດກະສັດໃນການໃຊ້ອຳນາດຢ່າງຖືກຕ້ອງ ແລະ ເປັນທຳ. ແຕ່ໜ້າເສຍດາຍທີ່ປະເທດຝຣັ່ງຫ້າມພຣະຄຳພີ ແລະ ຂັບໄລ່ຜູ້ທີ່ເຊື່ອຕິດຕາມພຣະຄຳພີ. ເປັນເວລາ ຫຼາຍສະຕະວັດຢ່າງຕໍ່ເນື່ອງ ທີ່ຜູ້ຊາຍທີ່ມີຄວາມເຊື່ອຖືກບັງຄັບໃຫ້ເປັນທາດຢູ່ໃນເຮືອພາຍຂະໜາດ ໃຫຍ່, ຖືກປະຫານຊີວິດດ້ວຍການເຜົາໄຟ ຫຼື ຖືກຂັງໃນຄຸກມືດຈົນຮ່າງກາຍເປື່ອຍເນົ່າ; ລັກສະນະ ຂອງຄົນເຫຼົ່ານີ້ຄື ມີຫຼັກທຳ, ມີຄວາມສັດຊື່, ເປັນຄົນສະຫຼາດ, ມີຈຸດຢືນດ້ານສິນທຳ ແລະ ກ້າເປັນ ພະຍານເຖິງຄວາມເຊື່ອຂອງຕົນ ອັນເປັນຄວາມເຊື່ອທີ່ສາມາດອົດທົນຕໍ່ຄວາມທຸກທໍລະມານເພື່ອຄວາມ ຈິງ. ຫຼາຍພັນຄົນຫຼົບໜີເພື່ອຄວາມປອດໄພ; ແລ້ວກໍເປັນດັ່ງນັ້ນຕັ້ງແຕ່ເລີ່ມຕົ້ນການປະຕິຮູບຕໍ່ເນື່ອງ ກັນ 250 ປີ. *{GC 277.3}*

“ຕະຫຼອດໄລຍະເວລາອັນດົນນານນັ້ນ ຊາວຝຣັ່ງເກືອບທຸກລຸ້ນກໍມີພວກສາວົກຂອງຂ່າວປະເສີດ ທີ່ຕ້ອງໜີໄປຕໍ່ໜ້າຄວາມຄຽດແຄ້ນຂອງຜູ້ຂົ່ມເຫັງທີ່ບ້າຄັ່ງ; ຄົນເຫຼົ່ານີ້ໄດ້ນຳຄວາມຮູ້, ສິລະປະ, ອຸດສາຫະກຳ ແລະ ລະບຽບວິໄນໄປພັດທະນາດິນແດນທັງຫຼາຍທີ່ພວກເຂົາໜີໄປນັ້ນ ເພາະໂດຍ ທົ່ວໄປກໍມີຄວາມຊຳນານໃນສິ່ງເຫຼົ່ານີ້. ພວກເຂົາພັດທະນາປະເທດອື່ນດ້ວຍທັກສະຄວາມສາມາດຂອງ ຕົນພຽງໃດ ປະເທດທີ່ພວກເຂົາໜີອອກມານັ້ນກໍຂາດຄວາມສາມາດດັ່ງກ່າວພຽງນັ້ນ. ຖ້າຫາກວ່າ ທຸກສິ່ງທີ່ຖືກຂັບໄລ່ອອກຈາກປະເທດຝຣັ່ງຍັງຢູ່; ຖ້າຫາກວ່າ, ໃນໄລຍະເວລາ 300 ປີນີ້ ຝີມື ແຮງງານອຸດສາຫະກຳຂອງພວກອົບພະຍົບ ໄດ້ພັດທະນາລະບົບກະເສດໃນປະເທດຂອງຕົນ; ຖ້າຫາກ ວ່າໃນ 300 ປີນີ້ ພວກເຂົາໄດ້ໃຊ້ຄວາມສາມາດດ້ານສິລະປະໃນການພັດທະນາຜົນຜະລິດຂອງ ປະເທດ; ຖ້າຫາກວ່າໃນ 300 ປີນີ້ ພວກອັດສະລິຍະບຸກຄົນໄດ້ໃຊ້ຄວາມສາມາດໃນການວິເຄາະເພື່ອ ພັດທະນາວັນນະກຳ ແລະ ວິທະຍາສາດຂອງບ້ານເມືອງ; ຖ້າສະຕິປັນຍາຂອງພວກເຂົາໄດ້ນຳພາການ ປົກຄອງຂອງບ້ານເມືອງ; ຖ້າຄວາມກ້າຫານຂອງພວກເຂົາໄດ້ຕໍ່ສູ້ໃນສົງຄາມ; ຖ້າຄວາມຍຸຕິທຳຂອງ ພວກເຂົາໄດ້ວາງລະບຽບກົດໝາຍ; ຖ້າສາສະໜາຂອງພຣະຄຳພີໄດ້ເສີມສ້າງສະຕິປັນຍາ ແລະ ການ ຄຸ້ມຄອງຈິດສຳນຶກຂອງປະຊາຊົນ, ຖ້າຫາກວ່າທັງໝົດນັ້ນໄດ້ເປັນຈິງ ປະເທດຝຣັ່ງຄົງຈະເລີນຮຸ່ງເຮືອງ ຢ່າງແນ່ນອນ! ຈະເປັນປະເທດທີ່ອຸດົມສົມບູນ ແລະ ປະຊາຊົນຈະມ່ວນຊື່ນໃຈບານ, ຈະເປັນປະເທດ ແບບຢ່າງໃຫ້ທຸກປະເທດ, ແຕ່ກໍບໍ່ໄດ້ເປັນເຊັ່ນນັ້ນເລີຍ!” *{GC 278.1}*

“ພວກຜູ້ນຳປະເທດຝຣັ່ງມີອະຄະຕິຈົນຕາບອດຫົວປັກຫົວປຳ; ພວກເຂົາຈຶ່ງຂັບໄລ່ອາຈານທັງຫຼາຍ ທີ່ສອນເລື່ອງຄຸນນະທຳ, ຜູ້ທີ່ເປັນແບບຢ່າງຂອງຊີວິດທີ່ມີລະບຽບທຸກຄົນ ແລະ ຄົນສັດຊື່ທັງປວງທີ່ ຈົງຮັກພັກດີຕໍ່ກະສັດ. ຄົນທີ່ພ້ອມສ້າງໃຫ້ປະເທດຊາດຂອງຕົນມີສັກສີ ແລະ ມີຊື່ສຽງໃນແຜ່ນດິນໂລກ ກໍຖືກບັງຄັບໃຫ້ຕ້ອງເລືອກລະຫວ່າງການຖືກປະຫານດ້ວຍການເຜົາໄຟ ຫຼື ການອົບພະຍົບໄປຕ່າງ ແດນ. ໃນທີ່ສຸດ, ຄວາມພິນາດຂອງປະເທດຝຣັ່ງກໍສົມບູນ; ຕອນນີ້ບໍ່ເຫຼືອຈິດສຳນຶກຜິດຊອບໃຫ້ຖືກ ຫ້າມ, ບໍ່ເຫຼືອຄວາມເຊື່ອຖືໃນຫຼັກສິນທຳທີ່ຈະເອົາໄປປະຫານ, ບໍ່ເຫຼືອຄວາມຈົງຮັກພັກດີຕໍ່ຊາດທີ່ຈະ ໃຫ້ຖືກຂັບໄລ່.”[22] ການປະຕິວັດຝຣັ່ງພ້ອມຄວາມໂຫດຮ້າຍທາລຸນທັງຫຼາຍຂອງການປະຕິວັດນັ້ນ ແມ່ນ ໝາກຜົນໂດຍກົງ. *{GC 279.1}*

“ເມື່ອ ພວກ ຊາວ ຮູເກໂນ ອົບພະຍົບ ໜີ ໄປ, ປະເທດ ຝຣັ່ງ ກໍ ເລີ່ມ ເສື່ອມຖອຍ ລົງ. ບັນດາ ເມືອງ ອຸດສາຫະກຳທີ່ຈະເລີນກໍຊຸດໂຊມ; ດິນດອນທີ່ເຮັດກະເສດຢ່າງອຸດົມສົມບູນກໍກັບກາຍເປັນປ່າໄມ້; ແທນ ໄລຍະເວລາແຫ່ງການພັດທະນາກ້າວໜ້າກໍມີຄວາມມືນທຶບທາງປັນຍາ ແລະ ສິນລະທຳທີ່ເສື່ອມຖອຍ

[22] ໄວລີ, ເຫຼັ້ມ 13, ບົດ 20.

ລົງ. ນະຄອນປາຣີກາຍເປັນບ່ອນລ້ຽງຄົນອະນາຖາ, ມີການກະປະມານວ່າ ໃນຊ່ວງເລີ່ມຕົ້ນຂອງການປະຕິວັດ ມີຄົນຈົນ 200,000 ຄົນ ອາໄສເງິນລ້ຽງຂອງກະສັດ. ມີແຕ່ຄະນະສົງເຢຊຸອິດເທົ່ານັ້ນທີ່ຈະເລີນຮຸ່ງເຮືອງຢູ່ໃນປະເທດທີ່ເສື່ອມໂຊມ; ພວກເຂົາໃຊ້ຜະເດັດການຢ່າງໜ້າຢ້ານປົກຄອງຢູ່ເໜືອຄຣິສຕະຈັກ, ສະຖາບັນສຶກສາ, ຄຸກ ແລະ ເຮືອພາຍທີ່ໃຊ້ແຮງງານທາດ." *{GC 279.2}*

ຮາກເຫງົ້າຂອງການປະຕິວັດ

ບັນຫາທາງການເມືອງ ແລະ ສັງຄົມຂອງປະເທດຝຣັ່ງທີ່ເຮັດໃຫ້ພວກບາດຫຼວງ, ກະສັດ ແລະ ສະມາຊິກສະພານິຕິບັນຍັດຂອງຊາດມຶນງົງນັ້ນ ກໍມີຄຳຕອບຢູ່ໃນຂ່າວປະເສີດ; ບັນຫາທີ່ນຳຊາດຝຣັ່ງໄປສູ່ສະພາບອະນາທິປະໄຕ[23] ແລະ ຄວາມພິນາດນັ້ນກໍມີທາງແກ້ໄຂໃນຂ່າວປະເສີດເຊັ່ນກັນ. ແຕ່ພາຍໃຕ້ການປົກຄອງຂອງຄຣິສຕະຈັກໂຣມ, ປະຊາຊົນໄດ້ສູນເສຍພຣະພອນຂອງພຣະຜູ້ຊ່ວຍໃຫ້ລອດທີ່ສອນໃຫ້ຄົນຮູ້ຈັກການເສຍສະຫຼະຕົນເອງ ແລະ ຄວາມຮັກທີ່ບໍ່ເຫັນແກ່ຕົວ. ພວກເຂົາໄດ້ຖືກລໍ້ໃຫ້ປະຖິ້ມການປະຕິເສດຕົນເອງ ແລະ ການເຫັນແກ່ປະໂຫຍດຂອງຄົນອື່ນ. ຄົນຮັ່ງມີບໍ່ໄດ້ຮັບການຕິຕຽນ ຍ້ອນການກົດຂີ່ຂົ່ມເຫັງຄົນທຸກຍາກ, ສ່ວນຄົນທຸກຍາກ ກໍບໍ່ໄດ້ຮັບການບັນເທົາຈາກການຕ້ອງເຮັດວຽກຄືກັບເປັນທາດໃນສະພາບທີ່ຕ່ຳກ່ຳຕ່ຳ. ຄວາມເຫັນແກ່ຕົວຂອງຄົນຮັ່ງມີ ແລະ ຜູ້ມີອຳນາດນັບມື້ກໍສະແດງອອກດ້ວຍການຂົ່ມເຫັງຫຼາຍຂຶ້ນຢ່າງເຫັນໄດ້ຊັດ. ຄວາມໂລບ ແລະ ຄວາມຟຸ່ມເຟືອຍຂອງພວກຂຸນນາງໄດ້ນຳໄປສູ່ການບີບບັງຄັບຄົນຍາກຈົນເປັນເວລາຫຼາຍຮ້ອຍປີ. ຄົນຮັ່ງມີເຮັດຜິດຕໍ່ຄົນທຸກຍາກ ແລະ ຄົນທຸກຍາກກໍກຽດຊັງຄົນຮັ່ງມີ. *{GC 279.3}*

ໃນຫຼາຍແຂວງ, ທີ່ດິນທັງໝົດເປັນຂອງພວກຂຸນນາງ, ສ່ວນຊົນຊັ້ນກຳມະກອນ ແລະ ຊາວໄຮ່ຊາວນາເປັນພຽງຜູ້ເຊົ່າຢູ່; ການກິນຢູ່ຂອງພວກເຂົາຂຶ້ນຢູ່ກັບຄວາມເມດຕາຂອງເຈົ້າຂອງທີ່ດິນ ແລະ ພວກເຂົາຈຳເປັນຕ້ອງຍອມຕໍ່ການຮຽກຮ້ອງອັນໜັກເຫຼືອທົນຂອງພວກຂຸນນາງ. ພາລະຂອງການສະໜັບສະໜູນທັງຄຣິສຕະຈັກ ແລະ ລັດຕົກຢູ່ກັບຄົນຊັ້ນກາງ ແລະ ຊັ້ນລຸ່ມທີ່ຖືກອຳນາດການປົກຄອງ ແລະ ພວກບາດຫຼວງເກັບພາສີຢ່າງໜັກໜ່ວງ. "ຄວາມສຸກຂອງພວກຂຸນນາງຖືເປັນກົດໝາຍສູງສຸດ; ຖ້າຊາວໄຮ່ຊາວນາ ແລະ ຄົນຈົນຈະອົດຕາຍ ພວກຜູ້ຂົ່ມເຫັງກໍບໍ່ສົນ. . . . ປະຊາຊົນຖືກບີບບັງຄັບທຸກດ້ານ ໃຫ້ເຮັດທຸກຢ່າງເພື່ອຜົນປະໂຫຍດໂດຍສະເພາະຂອງເຈົ້າຂອງທີ່ດິນ. ຊາວກະສິກອນຕ້ອງເຮັດວຽກໂດຍບໍ່ໄດ້ພັກບໍ່ໄດ້ເຊົາ ແລະ ໃຊ້ຊີວິດຢ່າງທຸກຍາກລຳບາກໂດຍບໍ່ໄດ້ຮັບການບັນເທົາ; ຖ້າຜູ້ໃດກ້າຮ້ອງທຸກ ກໍມີແຕ່ຖືກຄົນຮັ່ງມີດູຖູກດູໝິ່ນ. ສານຍຸຕິທຳຈະເຂົ້າຂ້າງພວກຂຸນນາງ; ພວກຜູ້ພິພາກສາກໍມີຊື່ສຽງໃນການຮັບສິນບົນ; ອາລົມຊົ່ວຊູບຂອງຊົນຊັ້ນສູງມີນ້ຳໜັກເທົ່າກັບກົດໝາຍ ຍ້ອນວ່າມີການສໍ້ລາດບັງຫຼວງທົ່ວໄປຈົນເປັນລະບົບ. ພາສີທີ່ພວກຂຸນນາງ ແລະ ພວກບາດຫຼວງຂູດຮີດອອກຈາກປະຊາຊົນນັ້ນ ໜ້ອຍກວ່າເຄິ່ງໜຶ່ງທີ່ເຂົ້າໄປໃນຄັງຫຼວງ ຫຼື ໃນຄັງຂອງຄຣິສຕະຈັກ, ສ່ວນທີ່ເຫຼືອແມ່ນພວກທີ່ເກັບນັ້ນຜານກິນເອງ. ຄົນເຫຼົ່ານັ້ນທີ່ເກັບພາສີຄົນອື່ນຈົນແຫ້ງ ພັດໄດ້ຮັບການຍົກເວັ້ນພາສີສຳລັບຕົວເອງ ແລະ ມີສິດຕາມກົດໝາຍ ຫຼື ຮີດຄອງປະເພນີໃນຕຳແໜ່ງທັງໝົດຂອງລັດ. ຊົນຊັ້ນທີ່ໄດ້ຮັບສິດທິພິເສດນີ້ມີຈຳນວນ 150,000 ຄົນ ເຊິ່ງຄົນນັບລ້ານຕ້ອງໃຊ້ຊີວິດຢ່າງສິ້ນຫວັງ ແລະ ທຸກຍາກເພື່ອບຳເລີໃຈຄົນເຫຼົ່ານັ້ນ." *{GC 279.4}*

ຄົນໃນຣາຊສຳນັກໃຊ້ຊີວິດຢ່າງຫຼູຫຼາ ແລະ ຜິດສິນທຳ. ປະຊາຊົນບໍ່ຄ່ອຍມີຄວາມເຊື່ອໝັ້ນໃນພວກຜູ້ປົກຄອງ. ທຸກຄົນສົງໄສວ່າທຸກມາດຕະການຂອງລັດຖະບານ ລ້ວນແຕ່ເປັນແຜນອຸບາຍທີ່

[23] ສະພາບທີ່ໄຮ້ກົດໝາຍ ແລະ ທຸກຄົນເຮັດຕາມໃຈຕົວເອງ.

ເຫັນແກ່ຕົວ. ກ່ອນການປະຕິວັດກ່ວາເຄິ່ງສະຕະວັດ ເປັນຣາຊສະໄໝຂອງກະສັດຫຼຸยส์ที่ 15, ເຊິ່ງ ໃນຍຸກສະໄໝທີ່ຊົ່ວຮ້າຍນັ້ນ ເພິ່ນມີຊື່ສຽງໂດ່ງດັງວ່າເປັນຄົນຂີ້ຄ້ານ, ໄຮ້ສາລະ ແລະ ມົວເມົາໃນ ການ. ສະພາບບ້ານເມືອງໃນເວລານັ້ນ ມີຊົນຊັ້ນນຳທີ່ໂຫດຮ້າຍ ແລະ ຂາດສິນທຳ, ສ່ວນ ຄົນຊັ້ນ ລຸ່ມກໍບໍ່ມີເງິນ ແລະ ຂາດການສຶກສາ; ໃນຂະນະດຽວກັນ ສະພາບການເງິນຂອງລັດຖະບານນັ້ນ ຝືດເຄືອງ ແລະ ປະຊາຊົນຄຽດແຄ້ນຈົນສຸດຈະທົນ. ສະນັ້ນ, ບໍ່ຈຳເປັນຕ້ອງມີຕາທິບຂອງນັກທຳນວາຍ ທີ່ຈະເຫັນວ່າຕ້ອງມີເຫດການທີ່ຮ້າຍແຮງປະທຸຂຶ້ນຢ່າງແນ່ນອນ. ທຸກຄັ້ງທີ່ພວກທີ່ປຶກສາຕັກເຕືອນ ກະສັດ, ເພິ່ນມັກຈະຕອບວ່າ: “ພະຍາຍາມຮັກສາສະຖານະການເອົາໄວ້ເທົ່າຊີວິດຂອງກູ; ຫຼັງຈາກກູ ຕາຍແລ້ວຈະເກີດຫຍັງຂຶ້ນກໍໃຫ້ມັນເກີດ.” ການພະຍາຍາມໂນ້ມນ້າວກະສັດໃຫ້ມີການປະຕິຮູບກໍບໍ່ໄດ້ ຜົນ. ເພິ່ນເຫັນຄວາມຊົ່ວຮ້າຍທີ່ກຳລັງເກີດຂຶ້ນ, ແຕ່ບໍ່ມີຄວາມກ້າຫານ ຫຼື ກຳລັງພໍທີ່ຈະປະເຊີນໜ້າ ກັບມັນ. ຄວາມພິນາດທີ່ລໍຖ້າປະເທດຝຣັ່ງແມ່ນເຫັນໄດ້ຊັດໃນຄຳຕອບອັນຂີ້ຄ້ານ ແລະ ເຫັນແກ່ຕົວ ຂອງເພິ່ນທີ່ກ່າວວ່າ, “ຫຼັງຈາກກູຕາຍແລ້ວ ໄພພິບັດຈະຖະຫຼົ່ມແນ່ນອນ!” *{GC 280.1}*

ຄຣິສຕະຈັກໂຣມອາໄສຄວາມອິດສາຂອງບັນດາກະສັດ ແລະ ຊົນຊັ້ນຜູ້ນຳເພື່ອໂນ້ມນ້າວພວກເຂົາ ໃຫ້ຄວບຄຸມປະຊາຊົນຄືກັບເປັນທາດຕໍ່ໄປ ໂດຍຮູ້ດີວ່າການກະທຳດັ່ງກ່າວຈະສົ່ງຜົນໃຫ້ອຳນາດລັດ ອ່ອນແອລົງ, ເພາະວ່າພວກເຂົາຄິດທີ່ຈະໃຊ້ວິທີນີ້ໃຫ້ທັງຜູ້ປົກຄອງ ແລະ ປະຊາຊົນຕົກຢູ່ໃນກຳມືຂອງຕົນ. ຄຣິສຕະຈັກໂຣມວາງນະໂຍບາຍໄລຍະຍາວ ເພາະຮູ້ວ່າ ຖ້າຈະຄວບຄຸມຄົນໃຫ້ເປັນທາດໄດ້ ສຳເລັດ ກໍຕ້ອງຜູກມັດຈິດວິນຍານຂອງພວກເຂົາ; ພວກເຂົາເຫັນວ່າວິທີທີ່ດີທີ່ສຸດໃນການປ້ອງກັນບໍ່ໃຫ້ ຄົນໜີຈາກການເປັນທາດໄດ້ ກໍຄືການເຮັດໃຫ້ພວກເຂົາຢູ່ໃນສະພາບທີ່ບໍ່ສາມາດຮັບເອົາເສລີພາບໄດ້ ເລີຍ. ມີຄວາມທຸກທີ່ເກີດຈາກນະໂຍບາຍຂອງຄຣິສຕະຈັກໂຣມ ເຊິ່ງຮ້າຍແຮງກ່ວາຄວາມທຸກທໍລະມານ ທາງກາຍເປັນພັນເທົ່າ, ນັ້ນຄືຄວາມເສື່ອມເສຍທາງດ້ານສິນລະທຳ. ປະຊາຊົນບໍ່ສາມາດເຂົ້າເຖິງພຣະ-ຄຳພີ ແຕ່ຖືກປະຖິ້ມໃຫ້ຮັບຟັງຄຳສອນທີ່ມີອະຄະຕິ ແລະ ຖືກສອນໃຫ້ເຫັນແກ່ຕົວ; ສະນັ້ນ, ປະຊາຊົນ ຈຶ່ງມີຄວາມໂງ່ຈ້າງົມງວາຍ ແລະ ເສື່ອມລົງໃນຄວາມບາບ ຈົນບໍ່ສາມາດປົກຄອງຕົນເອງໄດ້. *{GC 281.1}*

ແຕ່ໝາກຜົນທີ່ເກີດຈາກນະໂຍບາຍຂອງຄຣິສຕະຈັກໂຣມແຕກຕ່າງໄປຈາກຈຸດປະສົງຂອງພວກເຂົາ ຢ່າງໃຫຍ່ຫຼວງ. ແທນທີ່ຈະກົດມະຫາຊົນໃຫ້ຫຼັບຫູຫຼັບຕາເຮັດຕາມຄຳສອນຂອງຄຣິສຕະຈັກ, ນະໂຍບາຍ ເຫຼົ່ານັ້ນສົ່ງຜົນໃຫ້ປະຊາຊົນບໍ່ເຊື່ອໃນພຣະເຈົ້າ ແລະ ກາຍເປັນນັກປະຕິວັດ. ປະຊາຊົນລັງກຽດຄຳສອນ ຂອງຄຣິສຕະຈັກໂຣມ ເພາະຖືວ່າເປັນເລ່ລ່ຽມຂອງພວກບາດຫຼວງ; ພວກເຂົາຖືວ່າພວກບາດຫຼວງມີ ສ່ວນຮ່ວມໃນການກົດຂີ່ພວກເຂົາ. ພຣະເຈົ້າອົງດຽວທີ່ພວກເຂົາຮູ້ຈັກແມ່ນພຣະເຈົ້າຂອງຄຣິສຕະຈັກ ໂຣມ; ຄຳສອນຂອງຄຣິສຕະຈັກນັ້ນ ເປັນສາສະໜາດຽວທີ່ພວກເຂົາຄຸ້ນເຄີຍ. ປະຊາຊົນຖືວ່າຄວາມ ໂລບ ແລະ ຄວາມໂຫດຮ້າຍຂອງຄຣິສຕະຈັກໂຣມເປັນໝາກຜົນໂດຍກົງຂອງພຣະຄຳພີ, ພວກເຂົາຈຶ່ງ ບໍ່ຍອມຮັບເອົາພຣະຄຳພີເລີຍ. *{GC 281.2}*

ຄຣິສຕະຈັກໂຣມໄດ້ປິດເບືອນລັກສະນະຂອງພຣະເຈົ້າ ແລະ ຂໍ້ບັງຄັບຂອງພຣະອົງ; ມາບັດນີ້ ປະຊາຊົນຈຶ່ງປະຕິເສດທັງພຣະຄຳພີ ແລະ ພຣະເຈົ້າຂອງພຣະຄຳພີ. ຄຣິສຕະຈັກໂຣມຮຽກຮ້ອງໃຫ້ ຄົນຫຼັບຕາເຊື່ອໃນຄຳສອນຂອງຄຣິສຕະຈັກ ໂດຍອ້າງວ່າໄດ້ຮັບການສະໜັບສະໜູນຈາກພຣະຄຳພີ. ທ່ານ ໂວນແຕ (Voltaire) ກັບພັກພວກຈຶ່ງຕອບສະໜອງຕໍ່ສິ່ງເຫຼົ່ານີ້ ດ້ວຍການປະຖິ້ມພຣະຄຳຂອງ ພຣະເຈົ້າທັງໝົດ ແລະ ແຜ່ກະຈາຍພິດສົງເລື່ອງການບໍ່ເຊື່ອໃນພຣະເຈົ້າໄປໃນທຸກຫົນແຫ່ງ. ຄຣິສຕະຈັກ ໂຣມໄດ້ຢຽບຢ້ຳປະຊາຊົນລົງພາຍໃຕ້ສົ້ນຕີນເຫຼັກ; ບັດນີ້ເມື່ອມະຫາຊົນທີ່ເສື່ອມໂຊມ ແລະ ຖືກ ທຳຮ້າຍນັ້ນພະຍາຍາມດີ້ນຫຼຸດຈາກອຳນາດຜະເດັດການຂອງມັນ ພວກເຂົາກັບປະຖິ້ມການຄວບຄຸມ

ທຸກຢ່າງ. ປະຊາຊົນຮູ້ສຶກຄຽດແຄ້ນຕໍ່ຂອງປອມທີ່ພວກເຂົາເຄີຍເຄົາລົບນັບຖືເປັນເວລາດົນນານ ຈຶ່ງປະຕິເສດທັງຄວາມຈິງ ແລະ ຄວາມເທັດໄປພ້ອມກັນ; ພວກທາດຂອງຄວາມຊົ່ວເຂົ້າໃຈຜິດວ່າ ຄຳວ່າ: "ເສລີພາບ" ຮວມເຖິງການເຮັດບາບຢ່າງເສລີ, ພວກເຂົາຈຶ່ງພາກັນສະຫຼອງຄວາມເປັນອິດສະຫຼະ ເຖິງແມ່ນວ່າມັນບໍ່ແມ່ນອິດສະຫຼະທີ່ແທ້ຈິງ. *{GC 281.3}*

ໃນຊ່ວງການເລີ່ມຕົ້ນຂອງການປະຕິວັດນັ້ນ ກະສັດຍອມໃຫ້ປະຊາຊົນມີຕົວແທນຫຼາຍກວ່າພວກຂຸນນາງ ແລະ ພວກບາດຫຼວງຮວມກັນ; ສະນັ້ນ, ດຸນອຳນາດຈຶ່ງຕົກຢູ່ໃນມືຂອງປະຊາຊົນ; ແຕ່ພວກເຂົາບໍ່ມີຄວາມພ້ອມທີ່ຈະນຳໃຊ້ອຳນາດດັ່ງກ່າວດ້ວຍສະຕິປັນຍາ ແລະ ຄວາມເໝາະສົມ. ເຂົາທັງຫຼາຍມີຄວາມກະຕືລືລົ້ນທີ່ຈະແກ້ໄຂຄວາມບໍ່ເປັນທຳທີ່ເກີດຂຶ້ນກັບຝ່າຍຂອງຕົນ, ຈຶ່ງຕັ້ງຕົ້ນປ່ຽນແປງລະບົບສັງຄົມ. ປະຊາຊົນຄຽດແຄ້ນ, ຈິດໃຈເຕັມໄປດ້ວຍຄວາມຊົງຈຳອັນຂົມຂື່ນທີ່ບໍ່ໄດ້ຮັບຄວາມເປັນທຳເປັນເວລາດົນ; ພວກເຂົາຕັດສິນໃຈແກ້ໄຂສະພາບແຫ່ງຄວາມທຸກທີ່ເຈັບປວດຈົນທົນບໍ່ໄຫວ ແລະ ແກ້ແຄ້ນທຸກຄົນທີ່ພວກເຂົາຖືວ່າເປັນຕົ້ນເຫດຂອງຄວາມທຸກດັ່ງກ່າວ. ຄົນທີ່ເຄີຍຖືກຂົ່ມເຫັງໄດ້ຖອດຖອນບົດຮຽນຈາກຜູ້ທີ່ບີບບັງຄັບເຂົາໃນລະບອບຜະເດັດການ ແລ້ວຈຶ່ງຫັນມາກົດຂີ່ຜູ້ທີ່ເຄີຍກົດຂີ່ຕົນ. *{GC 282.1}*

ເປັນເລື່ອງທີ່ໜ້າເສົ້າສຳລັບປະເທດຝຣັ່ງທີ່ຕ້ອງເສຍເລືອດເນື້ອໃນການເກັບກ່ຽວໝາກຜົນຂອງເມັດພືດທີ່ໄດ້ຫວ່ານລົງໄປ ເຊິ່ງເປັນຜົນຮ້າຍແຮງຈາກການທີ່ເຄີຍຍອມໃຫ້ຄຣິສຕະຈັກໂຣມຄອບງຳ. ບ່ອນທີ່ປະເທດຝຣັ່ງໄດ້ປົກຫຸ້ມປະຫານຕົ້ນເສົາທຳອິດ ພາຍໃຕ້ອິດທິພົນຂອງຄຣິສຕະຈັກໂຣມໃນຊ່ວງເລີ່ມຕົ້ນຂອງການປະຕິຮູບນັ້ນ ກໍເປັນບ່ອນດຽວກັນທີ່ມີການຕັ້ງມີດປະຫານເຫຼັ້ມທຳອິດໃນຊ່ວງການປະຕິວັດ. ໃນບ່ອນທີ່ກຸ່ມທຳອິດຖືກເຜົາຕາຍຍ້ອນມີຄວາມເຊື່ອໃນຄຳສອນຂອງໂປຣແຕັສຕັງໃນສະຕະວັດທີ 16 ເປັນບ່ອນດຽວກັນທີ່ກຸ່ມທຳອິດຖືກຕັດຄໍໃນສະຕະວັດທີ 18. ຂ່າວປະເສີດເປັນສິ່ງທີ່ສາມາດຮັກສາບາດແຜຂອງປະເທດຝຣັ່ງໃຫ້ຫາຍ, ແຕ່ເມື່ອພວກເຂົາປະຕິເສດຂ່າວປະເສີດໄປແລ້ວ ກໍເປັນການເປີດປະຕູສູ່ຄວາມບໍ່ເຊື່ອໃນພຣະເຈົ້າ, ຄວາມພິນາດຈຶ່ງຕາມມາ. ເມື່ອພວກເຂົາປະຖິ້ມພຣະບັນຍັດຂອງພຣະເຈົ້າເຊິ່ງຢັບຢັ້ງຄວາມບາບໄປແລ້ວ, ປາກົດວ່າ ກົດໝາຍຂອງມະນຸດບໍ່ພຽງພໍທີ່ຈະຢັບຢັ້ງອາລົມຮຸນແຮງອັນແປປວນຂອງມະນຸດໄດ້; ປະເທດຝຣັ່ງຈຶ່ງຖືກນຳໄປສູ່ການກະບົດ ແລະ ສະພາບອະນາທິປະໄຕ. ສົງຄາມຕໍ່ສູ້ພຣະຄຳພີໄດ້ເປີດຍຸກໜຶ່ງຂຶ້ນ ເຊິ່ງປະຫວັດສາດໂລກເອີ້ນວ່າ "ສະໄໝທີ່ຄວາມໂຫດຫ້ຽມສະຫຍອງຂວັນຄອງເມືອງ." (The Reign of Terror). ຄວາມສະຫງົບສຸກ ແລະ ຄວາມຊົ່ນຊື່ນຍິນດີຖືກກຳຈັດປັດເປົ່າອອກໄປຈາກບ້ານເຮືອນ ແລະ ຈິດໃຈຂອງມະນຸດ. ບໍ່ມີໃຜປອດໄພ, ຜູ້ທີ່ຊະນະໃນມື້ນີ້ກໍຖືກຕັ້ງຂໍ້ຫາ ແລະ ຖືກຕັດສິນລົງໂທດໃນມື້ຖັດໄປ. ຄວາມຮຸນແຮງ ແລະ ກິເລດຕັນຫາໄດ້ປົກຄອງຈິດໃຈຜູ້ຄົນໂດຍບໍ່ມີການຢັບຢັ້ງ. *{GC 282.2}*

ທັງກະສັດ, ພວກບາດຫຼວງ ແລະ ພວກຂຸນນາງຖືກບັງຄັບໃຫ້ຍອມຈຳນົນຕໍ່ຄວາມໂຫດຮ້າຍຂອງປະຊາຊົນທີ່ລຸກຮື້ ແລະ ມີຄວາມຄຽດແຄ້ນຈົນຄວບຄຸມສະຕິບໍ່ໄດ້. ການປະຫານຊີວິດຂອງກະສັດ ຍິ່ງເຮັດໃຫ້ປະຊາຊົນຫິວກະຫາຍການແກ້ແຄ້ນຫຼາຍຂຶ້ນ; ສ່ວນຄົນທີ່ອອກຄຳສັ່ງໃຫ້ປະຫານກະສັດ ກໍຖືກປະຫານເອງຫຼັງຈາກນັ້ນບໍ່ດົນ. ທຸກຄົນທີ່ສົງໄສວ່າເປັນສັດຕູຕໍ່ການປະຕິວັດໄດ້ຖືກກຳນົດໃຫ້ຖືກຂ້າຖິ້ມ. ໃນຄຸກຕ່າງ ໆ ມີຄົນຖືກຂັງຢ່າງແອອັດ ເຊິ່ງມີຊ່ວງໜຶ່ງທີ່ຈຳນວນຜູ້ຖືກຂັງຫຼາຍກວ່າ 200,000 ຄົນ. ມີເຫດການໂຫດຮ້າຍອັນໜ້າຢ້ານກົວເກີດຂຶ້ນໃນເມືອງຕ່າງ ໆ. ພວກນັກປະຕິວັດຕ່າງແຕກແຍກກັນ, ຝ່າຍໜຶ່ງຕໍ່ສູ້ກັບອີກຝ່າຍໜຶ່ງ ຈົນປະເທດຝຣັ່ງໄດ້ກາຍເປັນສະໜາມຮົບ ທີ່ຄົນຕ່າງຝ່າຍຂັດແຍ້ງກັນຕາມອາລົມແປປວນຂອງແຕ່ລະກຸ່ມຄົນ. "ຢູ່ນະຄອນປາຣີມີການກໍ່ຄວາມວຸ້ນວາຍຢ່າງຕໍ່ເນື່ອງ, ພົນລະເມືອງຖືກແບ່ງອອກເປັນພັກເປັນພວກ, ເຊິ່ງເບິ່ງຄືວ່າຕ່າງຝ່າຍຕ່າງມຸ່ງຂ້າລ້າງຜານອີກ

ຝ່າຍໜຶ່ງ." ຊ້ຳຮ້າຍ, ໃນເວລານັ້ນປະເທດຝຣັ່ງກໍຍັງເຮັດສົງຄາມອັນຍາວນານ ແລະ ຮ້າຍແຮງກັບບັນດາ ປະເທດມະຫາອຳນາດຂອງເອີຣົບ. "ປະເທດເກືອບຈະລົ້ມລະລາຍ, ກອງທັບກຳລັງຮ້ອງຟ້ອງຂໍເງິນເດືອນ ທີ່ຄ້າງຈ່າຍ, ຊາວນະຄອນປາຣີອຶດຫິວ, ຕ່າງແຂວງກໍຖືກທຳລາຍໂດຍກອງໂຈນ ແລະ ອາລີຍະທຳ ເກືອບດັບສູນໄປພາຍໃຕ້ສະພາບອະນາທິປະໄຕ ແລະ ການປ່ອຍຕົວເຮັດຕາມອຳເພີ." *{GC 283.1}*

ປະຊາຊົນໄດ້ຮຽນຮູ້ບົດຮຽນຄວາມໂຫດຮ້າຍ ແລະ ການທໍລະມານຢ່າງດີ ເຊິ່ງຄຣິສຕະຈັກໂຣມໄດ້ ສອນມາຢ່າງພາກພຽນ, ແລ້ວມື້ແຫ່ງການລ້າງແຄ້ນໄດ້ມາຮອດໃນທີ່ສຸດ. ມາຮອບນີ້ມັນບໍ່ແມ່ນພວກ ສາວົກຂອງພຣະເຢຊູທີ່ຖືກໂຍນເຂົ້າໄປໃນຄຸກມືດ ຫຼື ຖືກລາກໄປປະຫານ, ເພາະພວກສາວົກເສຍ ຊີວິດ ຫຼື ຖືກຂັບໄລ່ອອກໄປໝົດແລ້ວຕັ້ງແຕ່ດົນ. ບັດນີ້, ຄຣິສຕະຈັກໂຣມທີ່ບໍ່ເຄີຍປານີໃຜ ໄດ້ ສຳຜັດເຖິງພະລັງອັນຮ້າຍກາດຂອງຄົນທີ່ພວກເຂົາເຄີຍສອນໃຫ້ຊື່ນຊົມໃນການຫຼັ່ງເລືອດ. "ແບບຢ່າງ ຂອງການຂົ່ມເຫັງທີ່ພວກບາດຫຼວງຂອງປະເທດຝຣັ່ງໄດ້ກະທຳໃສ່ຄົນອື່ນນັບມາຫຼາຍສະໄໝ, ບັດນີ້ກໍ ກັບຖືກພວກເຂົາເອງຢ່າງສາສົມ. ເລືອດຂອງພວກບາດຫຼວງໄຫຼລົ້ງຈາກຖານມິດປະຫານ. ເຮືອພາຍ ຂະໜາດໃຫຍ່ ແລະ ຄຸກຕ່າງໆ ເຊິ່ງເຄີຍເຕັມໄປດ້ວຍຊາວຮູເກີໂນ ບັດນີ້ກໍເຕັມໄປດ້ວຍຜູ້ທີ່ເຄີຍ ຂົ່ມເຫັງພວກເຂົາ. ພວກບາດຫຼວງຖືກຕ່ອງໂສ້ໃຫ້ພາຍເຮືອອັນເປັນການແບກຮັບເອົາຄວາມທຸກທັງຫຼາຍ ທີ່ຄຣິສຕະຈັກໂຣມເປັນເຫດໃຫ້ຄົນນອກຮີດຜູ້ອ່ອນສຸພາບຕ້ອງທົນ." *{GC 283.2}*

"ນັ້ນເປັນຊ່ວງເວລາເມື່ອສານທີ່ປ່າເຖື່ອນທີ່ສຸດຕັດສິນຕາມກົດໝາຍທີ່ປ່າເຖື່ອນທີ່ສຸດ; ເມື່ອເພື່ອນ ບ້ານບໍ່ສາມາດທັກທາຍກັນ ຫຼື ອະທິຖານ . . . ໂດຍບໍ່ສ່ຽງທີ່ຈະເຮັດຜິດໃນຂໍ້ຫາທີ່ມີໂທດປະຫານ; ເປັນ ຊ່ວງເວລາທີ່ມີສາຍສືບຄອຍຈ້ອງປອງຮ້າຍຢູ່ທົ່ວທຸກຫົນແຫ່ງ; ເມື່ອມີດປະຫານລົ່ງສັບ ໆ ຢູ່ຕະຫຼອດທຸກ ເຊົ້າ; ເມື່ອຄຸກທຸກແຫ່ງແອອັດຄືກັບຫ້ອງໃຕ້ເຮືອຂອງເຮືອບັນທຸກຂ້າທາດ; ເມື່ອຟອງເລືອດໄຫຼຜ່ານທໍ່ ລະບາຍນ້ຳລົ່ງໄປສູ່ແມ່ນ້ຳແຊນ (Seine). . . . ນອກຈາກນັ້ນ, ໃນແຕ່ລະມື້ ມີກອງບັນທຸກຜູ້ເຄາະຮ້າຍ ຜ່ານຖະໜົນໃນນະຄອນປາຣີໄປສູ່ຄວາມຕາຍ; ໃນຂະນະດຽວກັນ, ເຈົ້າໜ້າທີ່ຜູ້ທີ່ໄດ້ຮັບການແຕ່ງຕັ້ງ ຈາກຄະນະກຳມະການສູງສຸດໃຫ້ປະຈຳຕ່າງແຂວງ ໄດ້ເຮັດຄວາມໂຫດຫ້ຽມທາລຸນທີ່ຮ້າຍແຮງກວ່າ ທີ່ປາກົດຢູ່ໃນນະຄອນຫຼວງ. ພວກເຂົາຮູ້ສຶກວ່າມີດປະຫານສັບລົ່ງມາບໍ່ທັນ, ນັກໂທດທີ່ຍືນເປັນ ແຖວຍາວຖືກຍິງຖົ່ມໃຫ້ຕາຍລຽບ. ມີການເຈາະຮູໃນເຮືອບັກໃຫ້ນັກໂທດຈົມນ້ຳຕາຍພ້ອມກັນເປັນໝູ່ ໃຫຍ່. ເມືອງລີອົງ (Lyons) ກາຍເປັນທະເລຊາຍ. ສ່ວນທີ່ເມືອງອາຣັສ (Arras) ທ່າມກາງຄວາມ ໂຫດຮ້າຍທີ່ເກີດຂຶ້ນນັ້ນ, ແມ່ນແຕ່ຄວາມເມດຕາທີ່ຈະໃຫ້ນັກໂທດຕາຍໄວກໍຍັງບໍ່ມີ. ຕະຫຼອດສາຍແມ່ນ້ຳ ລົ໋ວ (Loire) ຕັ້ງແຕ່ເມືອງໂຊເມີ (Saumur) ເຖິງທະເລ ມີຝູງກາກັບແຫຼວຈຳນວນຫຼາຍກິນຊາກສົບ ທີ່ເປື່ອຍກາຍ ເຊິ່ງກອດພັນກັນຢ່າງໜ້າລັງກຽດ. ບໍ່ມີການສະແດງຄວາມເມດຕາເລີຍ ບໍ່ວ່າຈະຕໍ່ເພດ ໃດ ຫຼື ອາຍຸໃດກໍຕາມ. ຈຳນວນຊາວໜຸ່ມ ແລະ ຍິງສາວອາຍຸສິບເຈັດປີທີ່ຖືກລັດຖະບານອັນເລວຊາມ ຂ້າຕາຍນັ້ນ ມີຫຼາຍຮ້ອຍຄົນ. ພວກນັກປະຕິວັດພັກຢາໂກບິນ (Jacobin) ຈັບເດັກອ່ອນກິນນົມຄາ ເຕົ້າ ໃຊ້ຫອກແທງແລ້ວໂຍນຕໍ່ ໆ ກັນ." ໃນໄລຍະເວລາພຽງສິບປີ ມີຄົນຈຳນວນມະຫາສານຖືກຂ້າ ຕາຍ. *{GC 284.1}*

ທັງໝົດນີ້ເປັນໄປຕາມທີ່ຊາຕານຕ້ອງການ. ນີ້ແມ່ນສິ່ງທີ່ມັນມຸ່ງໝາຍຕະຫຼອດຫຼາຍຮ້ອຍປີເພື່ອໃຫ້ ມັນເກີດ. ນະໂຍບາຍຂອງມັນແມ່ນການຫຼອກລວງຕັ້ງແຕ່ຕົ້ນຈົນເຖິງສຸດທ້າຍ; ມັນປະສົງຢ່າງເດັດດ່ຽວ ໃຫ້ມະນຸດຕ້ອງທົນຕໍ່ຄວາມທຸກເວດທະນາ ເພື່ອທຳລາຍລັກສະນະ ແລະ ຝີພຣະຫັດຂອງພຣະເຈົ້າ ແລະ ທຳລາຍພຣະປະສົງແຫ່ງຄວາມຮັກ, ທັງໝົດນີ້ກໍເພື່ອສ້າງຄວາມໂສກເສົ້າໃນສະຫວັນ. ຈາກນັ້ນ ມັນຫຼອກລວງມະນຸດໃຫ້ໂທດພຣະເຈົ້າສຳລັບຜົນງານຂອງມັນເອງ, ເໝືອນກັບວ່າຄວາມທຸກທີ່ເກີດຂຶ້ນ

ນັ້ນ ເປັນແຜນການຂອງພຣະຜູ້ສ້າງ. ເຊັ່ນດຽວກັນ, ເມື່ອຄົນທີ່ຕົກຕ່ຳຍ້ອນຄວາມໂຫດຮ້າຍຂອງຊາຕານ ໄດ້ຮັບອິດສະຫຼະ, ມັນກໍຍຸຍົງໃຫ້ພວກເຂົາເຮັດຄວາມຊົ່ວຮ້າຍ ແລະ ປະພຶດເກີນຂອບເຂດ. ແລ້ວ ຜູ້ຜະເດັດການກັບພວກທີ່ກົດຂີ່ຂົ່ມເຫັງ ກໍຈະຊີ້ໄປຍັງການປ່ອຍຕົວເຮັດບາບໂດຍບໍ່ຢັບຢັ້ງຊັ່ງໃຈນັ້ນ ວ່າ ເປັນຕົວຢ່າງໝາກຜົນຂອງເສລີພາບ. {GC 284.2}

ເມື່ອມີຄົນສັ່ງເກດຄວາມຜິດທີ່ປອມຕົວແບບໜຶ່ງ ຊາຕານພຽງແຕ່ເອົາຄວາມຜິດນັ້ນມາອຳພາງແບບ ໃໝ່ ແລ້ວຄົນສ່ວນຫຼາຍກໍຈະຫຼົງຮັບເອົາຢ່າງກະຕືລືລົ້ນ ເທົ່າກັບຕອນທີ່ຄວາມຜິດນັ້ນຢູ່ໃນຮູບແບບ ເດີມ. ເມື່ອປະຊາຊົນພົບວ່າລະບົບຄຳສອນຂອງຄຣິສຕະຈັກໂຣມນັ້ນເປັນການຫຼອກລວງ ຊາຕານຈຶ່ງ ບໍ່ສາມາດໃຊ້ຄຣິສຕະຈັກໂຣມເພື່ອນຳຄົນໃຫ້ລະເມີດພຣະບັນຍັດຂອງພຣະເຈົ້າ; ມັນຈຶ່ງປຸກປັ່ນໃຫ້ຄົນ ທັງຫຼາຍເຫັນວ່າ ສາສະໜາທຸກຢ່າງເປັນການຫຼອກລວງ ແລະ ພຣະຄຳພີເປັນພຽງນິຍາຍ, ພວກເຂົາ ຈຶ່ງຖິ້ມຂໍ້ບັງຄັບຂອງພຣະເຈົ້າ ແລະ ປ່ອຍຕົວເຮັດຊົ່ວໂດຍບໍ່ຢັບຢັ້ງໃຈ. {GC 285.1}

ຄວາມຜິດພາດອັນຮ້າຍແຮງ ທີ່ເຮັດໃຫ້ຊາວປະເທດຝຣັ່ງໄດ້ຮັບຄວາມເສຍຫາຍນັ້ນ ແມ່ນການບໍ່ ເອົາໃຈໃສ່ຕໍ່ຫຼັກຄວາມຈິງອັນຍິ່ງໃຫຍ່ຢູ່ຂໍ້ດຽວ ກໍຄື ເສລີພາບທີ່ແທ້ຈິງຢູ່ພາຍໃຕ້ຂໍ້ຫ້າມແຫ່ງພຣະບັນຍັດ ຂອງພຣະເຈົ້າ. “ຖ້າເຈົ້າໄດ້ເຮັດແຕ່ຕາມຄຳສັ່ງຂອງເຮົາ ແລ້ວພອນກໍຈະຫຼັ່ງໄຫຼດັ່ງສາຍນ້ຳບໍ່ ບົກ ແຫ້ງ. ແລ້ວໄຊຊະນະກໍຈະເປັນຂອງເຈົ້າໃນທັນທີ ດັ່ງຄື້ນທະເລທີ່ຖືກລົມພັດມາເທິງຊາຍຫາດ.” “ອົງພຣະຜູ້ເປັນເຈົ້າກ່າວວ່າ, ‘ຄວາມປອດໄພຈະບໍ່ມີສຳລັບພວກຄົນຊົ່ວຮ້າຍ.’” “ແຕ່ຜູ້ໃດກໍຕາມທີ່ຟັງ ເຮົາຈະປອດໄພ ແລະ ຈະມີຊີວິດຢູ່ໂດຍບໍ່ຢ້ານອັນຕະລາຍໃດໆທັງສິ້ນ.” (ເອຊາຢາ 48:18, 22 LO2012; ສຸພາສິດ 1:33). {GC 285.2}

ຄົນທີ່ບໍ່ເຊື່ອວ່າມີພຣະເຈົ້າ ແລະ ຄົນທີ່ບໍ່ເຊື່ອໃນສາສະໜາ ພ້ອມດ້ວຍພວກທີ່ຫຼົງໄປຈາກຄວາມເຊື່ອ ນັ້ນ ລ້ວນແຕ່ຕໍ່ຕ້ານ ແລະ ປະນາມພຣະບັນຍັດຂອງພຣະເຈົ້າ; ແຕ່ອິດທິພົນຂອງພວກເຂົາສົ່ງຜົນ ທີ່ພິສູດວ່າ ຄວາມສຸກຂອງມະນຸດຂຶ້ນຢູ່ກັບການເຊື່ອຟັງກົດບັນຍັດຂອງພຣະອົງ. ໃຫ້ຜູ້ທີ່ບໍ່ຍອມອ່ານ ບົດຮຽນຈາກພຣະຄຳຂອງພຣະເຈົ້າ ຈົ່ງໄປອ່ານບົດຮຽນໃນປະຫວັດສາດຂອງຊົນຊາດທັງປວງ. {GC 285.3}

ເມື່ອຊາຕານເຄື່ອນໄຫວຜ່ານຄຣິສຕະຈັກໂຣມ ເພື່ອນຳພາມະນຸດອອກຈາກການເຊື່ອຟັງພຣະເຈົ້າ, ມັນປອມຕົວ ແລະ ປິດບັງວຽກງານຂອງຕົວເອງ ຈົນຄົນບໍ່ເຂົ້າໃຈວ່າຄວາມເສື່ອມໂຊມ ແລະ ຄວາມທຸກ ລຳບາກທີ່ເກີດຂຶ້ນນັ້ນ ເປັນຜົນຂອງການລ່ວງລະເມີດພຣະບັນຍັດຂອງພຣະເຈົ້າ. ຢ່າງໃດກໍຕາມ, ພຣະວິນຍານບໍຣິສຸດໄດ້ຕ້ານທານແຜນການຂອງມັນ ເພື່ອບໍ່ໃຫ້ຜົນບານປາຍຢ່າງເຕັມທີ່. ປະຊາ-ຊົນບໍ່ໄດ້ຄົ້ນຫາຕົ້ນສາຍປາຍເຫດຂອງຄວາມທຸກທີ່ເກີດຂຶ້ນກັບພວກເຂົາ. ແຕ່ໃນການປະຕິວັດຝຣັ່ງ ນັ້ນ ກອງປະຊຸມແຫ່ງຊາດໄດ້ປະຕິເສດພຣະບັນຍັດຂອງພຣະເຈົ້າຢ່າງເປີດເຜີຍ; ຕໍ່ມາ, ໃນສະໄໝທີ່ ຄວາມໂຫດຫ້ຽມສະຫຍອງຂວັນຄອງເມືອງ ຄົນທັງຫຼາຍຈຶ່ງສາມາດເຫັນຜົນທີ່ເກີດຂຶ້ນຈາກການປະຖິ້ມ ພຣະຄຳພີ. {GC 285.4}

ເມື່ອປະເທດຝຣັ່ງປະຕິເສດພຣະເຈົ້າຢ່າງເປີດເຜີຍ ແລະ ປະຖິ້ມພຣະຄຳພີ, ຄົນຊົ່ວ ແລະ ຜີມານ ພາກັນສະແດງຄວາມຍິນດີໃນການບັນລຸຈຸດປະສົງຂອງພວກເຂົາ ທີ່ຕ້ອງການມາເປັນເວລາດົນນານ ກໍຄື ອານາຈັກທີ່ບໍ່ຖືກຈຳກັດໂດຍພຣະບັນຍັດຂອງພຣະເຈົ້າ. ເນື່ອງຈາກບໍ່ມີການລົງໂທດການກະທຳທີ່ ຊົ່ວຊ້າໃນທັນທີ, ສະນັ້ນຈິດໃຈຂອງມະນຸດຈຶ່ງ “ເຈດຕະນາມຸ່ງທີ່ຈະກະທຳຄວາມຊົ່ວ.” (ປັນຍາຈານ 8:11 TKJV). ແຕ່ການລ່ວງລະເມີດພຣະບັນຍັດທີ່ທ່ຽງທຳ ແລະ ຊອບທຳນັ້ນ ສົ່ງຜົນໃຫ້ເກີດ ຄວາມທຸກ ແລະ ຄວາມພິນາດຢ່າງຫຼີກລ່ຽງບໍ່ໄດ້. ເຖິງແມ່ນວ່າການລົງໂທດບໍ່ໄດ້ເກີດຂຶ້ນທັນທີ ແຕ່ ຄວາມຊົ່ວຂອງມະນຸດກໍນຳພາພວກເຂົາສູ່ຄວາມພິນາດຢ່າງແນ່ນອນ ແລະ ຊາວຝຣັ່ງກໍບໍ່ພົ້ນຈາກກົດ

ນັ້ນ. ການປະຖິ້ມຄວາມເຊື່ອ ແລະ ອາດຊະຍາກຳທີ່ສະສົມໄວ້ເປັນເວລາຫຼາຍຮ້ອຍປີ ໄດ້ກອງຂຶ້ນ ລໍຖ້າວັນແຫ່ງການຕອບສະໜອງ; ແລ້ວເມື່ອຄວາມຊົ່ວຮ້າຍຂອງພວກເຂົາເຕັມອັດຕາ, ຄົນເຫຼົ່ານັ້ນທີ່ ດູຖູກພຣະເຈົ້າໄດ້ຮຽນຮູ້ເມື່ອສາຍເກີນໄປວ່າ ການເຮັດຊົ່ວຈົນໝົດຄວາມອົດທົນຂອງພຣະເຈົ້າ ເປັນສິ່ງ ທີ່ໜ້າຢ້ານກົວແທ້. ພຣະວິນຍານຂອງພຣະເຈົ້າທີ່ຢັບຢັ້ງອຳນາດອັນໂຫດຮ້າຍຂອງຊາຕານ ໄດ້ຖືກຖອນ ຄືນໄປສ່ວນຫຼາຍ; ປ່ອຍໃຫ້ພະຍາມານ, ຜູ້ຊື່ນຊົມພຽງແຕ່ໃນຄວາມທຸກເວດທະນາຂອງມະນຸດ, ເຮັດ ຕາມຄວາມປະສົງຂອງມັນ. ຜູ້ທີ່ເລືອກຢູ່ຝ່າຍກະບົດໄດ້ຖືກປະຖິ້ມໃຫ້ເກັບກ່ຽວໝາກຜົນຂອງການ ກະບົດ ຈົນແຜ່ນດິນເຕັມໄປດ້ວຍອາດຊະຍາກຳທີ່ໜ້າຢ້ານເກີນທີ່ຈະບັນລະຍາຍ. ມີສຽງຮ້ອງຢ່າງສຸດ ແສນເຈັບປວດຈາກບັນດາເມືອງ ແລະ ແຂວງທີ່ຖືກທຳລາຍ. ປະເທດຝຣັ່ງຖືກສັ່ນສະເທືອນຄືກັບ ແຜ່ນດິນໄຫວ. ສາສະໜາ, ກົດໝາຍ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ, ຄອບຄົວ, ລັດ ແລະ ຄຣິສຕະຈັກ ລ້ວນແຕ່ຖືກຟາດລົງດ້ວຍມືທີ່ຍົກຂຶ້ນເພື່ອຕໍ່ຕ້ານພຣະບັນຍັດຂອງພຣະເຈົ້າ. ຖ້ອຍຄຳຂອງ ກະສັດໂຊໂລໂມນເປັນຄວາມຈິງແທ້ແນ່ນອນ ທີ່ກ່າວວ່າ: “ຄົນຊົ່ວຮ້າຍພັດຕາຍໄປຍ້ອນຄວາມຊົ່ວທີ່ຕົນໄດ້ ກະທຳໄວ້.” “ແມ່ນຄົນບາບທຳຊົ່ວຕັ້ງຮ້ອຍຄັ້ງ ແລະ ອາຍຸຂອງລາວໝັ້ນຍືນຢູ່ໄດ້ ແຕ່ຂ້າພະເຈົ້າຍັງຮູ້ແນ່ ວ່າ ຄວາມດີຈະມີແກ່ເຂົາທັງຫຼາຍທີ່ຢຳເກງພຣະເຈົ້າ ຄືທີ່ມີຄວາມຢຳເກງຕໍ່ພຣະພັກພຣະອົງ. ແຕ່ວ່າຈະ ບໍ່ເປັນການດີແກ່ຄົນຊົ່ວຮ້າຍ.” (ສຸພາສິດ 11:5; ປັນຍາຈານ 8:12, 13 ດັດແປງຈາກສະບັບ TKJV). “ເພາະເຈົ້າກຽດຊັງຄວາມຮູ້ ແລະ ປະຕິເສດທີ່ຈະຢ້ານຢຳອົງພຣະຜູ້ເປັນເຈົ້າ,” “ດ້ວຍເຫດນີ້ ເຈົ້າຈຶ່ງຈະ ໄດ້ຮັບຜົນຕອບແທນຕາມທາງຂອງເຈົ້າ ຈົນເຈົ້າເບື່ອໜ່າຍຕໍ່ຄວາມຊົ່ວທີ່ເຈົ້າໄດ້ກະທຳມາ.” (ສຸພາສິດ 1:29 LO2012, 31). *{GC 286.1}*

ພະຍານທີ່ສັດຊື່ຂອງພຣະເຈົ້າ ຖືກຂ້າຕາຍດ້ວຍອຳນາດທີ່ໝິ່ນປະໝາດເຊິ່ງ “ອອກມາຈາກ ເຫວເລິກ;” ຢ່າງໃດກໍຕາມ ພະຍານເຫຼົ່ານັ້ນບໍ່ໄດ້ນິ່ງງຽບຢູ່ດົນ. “ຫຼັງຈາກສາມວັນເຄິ່ງຜ່ານໄປ ແລ້ວ ລົມຫາຍໃຈທີ່ມີຊີວິດມາຈາກພຣະເຈົ້າ ກໍໄດ້ເຂົ້າໄປໃນຊາກສົບຂອງພວກເພິ່ນ ແລະ ທັງສອງ ໄດ້ລຸກຂຶ້ນ ແລະ ທຸກຄົນທີ່ໄດ້ເຫັນພວກເພິ່ນ ຕ່າງກໍຕົກໃຈຢ້ານກົວຢ່າງໃຫຍ່ຫຼວງ.” (ພຣະນິມິດ 11:11). ມະຕິຂອງກອງປະຊຸມແຫ່ງຊາດຝຣັ່ງທີ່ລົບລ້າງສາສະໜາຄຣິສ ແລະ ປະຕິເສດພຣະຄຳພີ ຢ່າງເປັນທາງການນັ້ນເກີດຂຶ້ນໃນປີ 1793. ຫຼັງຈາກນັ້ນ, ສາມປີເຄິ່ງກອງປະຊຸມດັ່ງກ່າວມີມະຕິ ໃໝ່ທີ່ລຶບລ້າງມະຕິເດີມ, ຈຶ່ງເປັນການອະນຸຍາດໃຫ້ເຜີຍແຜ່ພຣະຄຳພີໄດ້. ຊາວໂລກທັງປວງພາກັນ ຕົກຕະລຶງກັບຄວາມຊົ່ວທີ່ເກີດຂຶ້ນ ອັນເປັນຜົນຂອງການປະຕິເສດພຣະຄຳພີ, ຈຶ່ງມີຄົນຈຳນວນ ຫຼວງຫຼາຍເຫັນວ່າຄວາມເຊື່ອໃນພຣະເຈົ້າ ແລະ ໃນພຣະຄຳຂອງພຣະອົງເປັນຮາກຖານອັນຈຳເປັນ ສຳລັບຄຸນນະທຳ ແລະ ສິນລະທຳ. ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: “ເຈົ້າຄິດວ່າເຈົ້າເວົ້າໝິ່ນປະໝາດ ຜູ້ໃດ? ແລະໄດ້ປ້ອຍດ່າຜູ້ໃດ? ເຈົ້າໄດ້ຂຶ້ນສຽງຕໍ່ສູ້ຜູ້ໃດ? ແລະແຫງນຕາທີ່ໂອ້ອວດຂອງເຈົ້າຕໍ່ສູ້ພຣະເຈົ້າ ອົງບໍຣິສຸດແຫ່ງຊາດອິດສະຣາເອນ.” (ເອຊາຢາ 37:23). “ສະນັ້ນເຮົາຈະສັ່ງສອນພວກເຂົາ; ຄາວນີ້ເຮົາ ຈະສອນໃຫ້ເຂົາຮູ້ເຖິງຣິດທານຸພາບ ແລະ ຣິດອຳນາດຂອງເຮົາ ແລ້ວພວກເຂົາຈະຮູ້ວ່າ ນາມຂອງເຮົາ ຄືພຣະເຢໂຮວາ.” (ເຢເຣມີຢາ 16:21 TKJV). *{GC 287.1}*

ຜູ້ເຜີຍພຣະທຳກ່າວຕື່ມວ່າ: “ແລ້ວຜູ້ປະກາດພຣະທຳທັງສອງ ກໍໄດ້ຍິນສຽງດັງມາຈາກສະຫວັນ ວ່າ ‘ຈົ່ງຂຶ້ນມາເທິງພີ້.’ ໃນຂະນະທີ່ພວກສັດຕູຂອງພວກເພິ່ນເຝົ້າເບິ່ງຢູ່ນັ້ນ ພວກເພິ່ນກໍຂຶ້ນເມືອ ໃນເມກເຂົ້າສູ່ສະຫວັນ.” (ພຣະນິມິດ 11:12). ນັບຕັ້ງແຕ່ປະເທດຝຣັ່ງເຮັດສົງຄາມຕໍ່ສູ້ພະຍານທັງ ສອງຂອງພຣະເຈົ້າ, ພຣະຄຳພີໄດ້ຮັບກຽດຢ່າງທີ່ບໍ່ເຄີຍໄດ້ຮັບມາກ່ອນ. ໃນປີ 1804 ມີການຈັດ ຕັ້ງ *ສະມາຄົມພຣະຄຣິສຕະທຳແຫ່ງອັງກິດ ແລະ ຕ່າງປະເທດ* ຂຶ້ນ. ຈາກນັ້ນກໍມີອົງກອນທີ່ຄ້າຍຄື

ກັນ ເຊິ່ງມີສາຂາຈຳນວນຫຼາຍຢູ່ທົ່ວທະວີບເອີຣົບ. ໃນປີ 1816 ສະມາຄົມພຣະຄຣິສຕະທຳຂອງອາເມຣິກາໄດ້ຖືກຈັດຕັ້ງຂຶ້ນ. ເມື່ອສະມາຄົມພຣະຄຣິສຕະທຳອັງກິດຖືກຕັ້ງຂຶ້ນນັ້ນ ມີການຈັດພິມພຣະຄຳພີໃນ 50 ພາສາ. ຕັ້ງແຕ່ນັ້ນມາ, ມີການແປພຣະຄຳພີເປັນຫຼາຍຮ້ອຍພາສາ. {GC 287.2}

ໃນໄລຍະເວລາຫ້າສິບປີກ່ອນປີ 1792 ບໍ່ຄ່ອຍມີຜູ້ໃດໃສ່ໃຈໃນການປະກາດຂ່າວປະເສີດໃນຕ່າງປະເທດ. ບໍ່ມີສະມາຄົມໃໝ່ຖືກຈັດຂຶ້ນໃນຊ່ວງເວລານັ້ນເພື່ອການປະກາດໃນຕ່າງແດນ ແລະ ບໍ່ຄ່ອຍມີຄຣິສຕະຈັກໃດພະຍາຍາມເຜີຍແຜ່ຫຼັກສາສະໜາຄຣິສໃນດິນແດນທີ່ຂ່າວປະເສີດຍັງເຂົ້າໄປບໍ່ເຖິງ; ແຕ່ຊ່ວງທ້າຍສະຕະວັດທີ 18 ກໍມີການປ່ຽນແປງອັນໃຫຍ່ຫຼວງ. ຫຼາຍຄົນຮູ້ສຶກບໍ່ພໍໃຈກັບຜົນຂອງລັດທິເຫດຜົນນິຍົມ ແລະ ມາຮັບຮູ້ວ່າຈຳເປັນຕ້ອງເພິ່ງການເປີດເຜີຍຈາກພຣະເຈົ້າ ແລະ ຕ້ອງມີປະສົບການໃນຊີວິດເຖິງຜົນຂອງການນັບຖືສາສະໜາ. ຕັ້ງແຕ່ນັ້ນມາ ການປະກາດຂ່າວປະເສີດໃນຕ່າງແດນໄດ້ຂະຫຍັບຂະຫຍາຍຢ່າງທີ່ບໍ່ເຄີຍເປັນມາກ່ອນ. {GC 287.3}

ການພັດທະນາອຸດສາຫະກຳການພິມ ເປັນແຮງຊຸກຍູ້ວຽກງານການແຈກຈ່າຍພຣະຄຳພີ. ມີຫຼາຍສິ່ງທີ່ປູທາງໃຫ້ພຣະຄຳຂອງພຣະເຈົ້າສາມາດຮັບການເຜີຍແຜ່ເຂົ້າໄປໃນປະເທດຕ່າງ ໆ ເຊັ່ນ: ການສື່ສານລະຫວ່າງປະເທດທີ່ສະດວກຂຶ້ນ, ການທຳລາຍອະຄະຕິ ແລະ ຄວາມເປັນຊາດນິຍົມຈົນບໍ່ຕິດຕໍ່ສຳພັນກັບຊາດອື່ນ, ພ້ອມດ້ວຍການສູນເສຍອຳນາດຝ່າຍການປົກຄອງຂອງສັນຕະປາປາ. ເປັນເວລາຫຼາຍປີທີ່ມີການຈຳໜ່າຍພຣະຄຳພີຕາມຖະໜົນຫົນທາງໃນນະຄອນໂຣມ ໂດຍບໍ່ໄດ້ຖືກຫ້າມໄວ້ເລີຍ ແລະ ຕອນນີ້ພຣະຄຳພີໄດ້ຖືກນຳໄປເຖິງທຸກບ່ອນຂອງໂລກທີ່ມີຄົນອາໄສຢູ່. {GC 288.1}

ທ່ານ ໂວນແຕ ເປັນຜູ້ໜຶ່ງທີ່ມີຊື່ສຽງວ່າບໍ່ເຊື່ອໃນພຣະເຈົ້າ, ລາວເຄີຍກ່າວໂອ້ອວດວ່າ: “ຂ້ອຍຮູ້ສຶກເປັນຕາໜ່າຍທີ່ຕ້ອງຟັງຄົນເວົ້າຊ້ຳຊາກວ່າ ມີຊາຍພຽງສິບສອງຄົນກໍ່ຕັ້ງສາສະໜາຄຣິສ. ຂ້ອຍຈະພິສູດໃຫ້ເຫັນວ່າ ຜູ້ຊາຍຄົນດຽວສາມາດໂຄ່ນມັນລົງໄດ້.” ແຕ່ມີຫຼາຍລຸ້ນຄົນເກີດມາ ແລ້ວກໍຈາກໄປຫຼັງຈາກທີ່ໂວນແຕເສຍຊີວິດ, ມີຫຼາຍລ້ານຄົນໄດ້ເຂົ້າຮ່ວມເຮັດສົງຄາມຕໍ່ສູ້ພຣະຄຳພີ, ແຕ່ແທນທີ່ມັນຈະຖືກທຳລາຍ ກໍຍິ່ງມີຫຼາຍກວ່າເກົ່າ. ບ່ອນໃດມີພຣະຄຳຂອງພຣະເຈົ້າພຽງຮ້ອຍເຫຼັ້ມໃນສະໄໝຂອງໂວນແຕ ໃນສະໄໝນີ້ກໍມີເປັນໝື່ນເປັນແສນເຫຼັ້ມ. ມີນັກປະຕິຮູບໃນສະໄໝຕົ້ນ ໆ ກ່າວເຖິງຄຣິສຕະຈັກວ່າ, “ພຣະຄຳພີແມ່ນທັ່ງຕີເຫຼັກ[24] ທີ່ເຮັດໃຫ້ຄ້ອນຕີຫຼາຍອັນຫຼ້ຽຍຫ້ຽນ” ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: “ບໍ່ມີອາວຸດໃດ ໆ ທີ່ທຳຮ້າຍເຈົ້າໄດ້ເລີຍ ເຈົ້າຈະມີຄຳຕອບແກ່ທຸກຄົນທີ່ຟ້ອງເຈົ້າ.” (ເອຊາຢາ 54:17). {GC 288.2}

“ພຣະຄຳຂອງພຣະເຈົ້າກໍດຳລົງຢູ່ຕະຫຼອດໄປເປັນນິດ.” “ພຣະບັນຍັດທັງຫຼາຍຂອງພຣະອົງກໍໄວ້ໃຈໄດ້, ສະຖາປະນາຢູ່ເປັນນິດ ແລະ ປະກອບດ້ວຍຄວາມຈິງກັບຄວາມທ່ຽງທຳ.” (ເອຊາຢາ 40:8; ເພງສັນລະເສີນ 111:7, 8 ດັດແປງຈາກສະບັບ TKJV). ສິ່ງໃດກໍຕາມທີ່ສ້າງຂຶ້ນໂດຍສິດອຳນາດຂອງມະນຸດຈະຖືກໂຄ່ນລົງ; ແຕ່ສິ່ງທີ່ຕັ້ງຢູ່ເທິງຮາກຖານແຫ່ງພຣະຄຳທີ່ບໍ່ປ່ຽນແປງຂອງພຣະເຈົ້າ ຈະຕັ້ງໝັ້ນຢູ່ຕະຫຼອດໄປ. {GC 288.3}

[24] anvil, ແທ່ງເຫຼັກໃຫຍ່ທີ່ໃຊ້ຮອງເພື່ອຕີເຫຼັກ.

16

ກຸ່ມປົນກຣິມລຸ້ນບຸກເບີກ

ຮ່ອງຮອຍຂອງໂຣມໃນຄຣິສຕະຈັກແຫ່ງອັງກິດ

ເຖິງແມ່ນວ່າພວກນັກປະຕິຮູບຊາວອັງກິດ ໄດ້ປະຕິເສດຄຳສອນຂອງຄຣິສຕະຈັກໂຣມ, ແຕ່ພວກເຂົາ ກໍຍັງຮັກສາຮູບແບບຫຼາຍຢ່າງເອົາໄວ້. ດັ່ງນັ້ນ, ເຖິງແມ່ນວ່າມີການປະຕິເສດສິດອຳນາດ ແລະ ຫຼັກຂໍ້ເຊື່ອ ຂອງຄຣິສຕະຈັກໂຣມກໍຕາມ, ແຕ່ໃນການນະມັດສະການຂອງຄຣິສຕະຈັກແຫ່ງອັງກິດ ຍັງມີການຖື ຕາມປະເພນີ ແລະ ພິທີກຳຂອງຄຣິສຕະຈັກໂຣມຢູ່ຫຼາຍພໍສົມຄວນ. ມີການກ່າວອ້າງວ່າ ສິ່ງເຫຼົ່ານີ້ ບໍ່ແມ່ນເລື່ອງຂອງຈິດສຳນຶກຜິດຊອບ; ແລະເນື່ອງຈາກບໍ່ມີກົດບັນຍັດໃນພຣະຄຳພີທີ່ກ່າວເຖິງສິ່ງເຫຼົ່ານີ້ ຢູ່ ມັນກໍເປັນເລື່ອງທີ່ບໍ່ຈຳເປັນ, ແຕ່ໃນຂະນະດຽວກັນກໍບໍ່ໄດ້ຖືກຫ້າມ. ສະນັ້ນ, ພວກເຂົາຈຶ່ງສະຫຼຸບ ວ່າ ປະເພນີ ແລະ ພິທີກຳເຫຼົ່ານັ້ນບໍ່ມີຄວາມຊົ່ວໃນຕົວມັນເອງ. ການປະຕິບັດຕາມຮູບແບບຂອງໂຣມ ນັ້ນ ສົ່ງຜົນໃຫ້ຄວາມແຕກຕ່າງທີ່ມີຢູ່ລະຫວ່າງພວກຄຣິສຕະຈັກຝ່າຍການປະຕິຮູບ ກັບຄຣິສຕະຈັກ ໂຣມນັ້ນ ໜ້ອຍລົງ; ມີຄົນໃຫ້ເຫດຜົນວ່າ ປະເພນີ ແລະ ພິທີກຳເຫຼົ່ານັ້ນຈະຊ່ວຍໃຫ້ຄົນທີ່ຢູ່ໃນ ຄຣິສຕະຈັກໂຣມໄດ້ກັບໃຈຮັບເຊື່ອໃນຫຼັກໂປຣແຕັສຕັງ. *{GC 289.1}*

ສຳລັບຄົນທີ່ບໍ່ມັກການປ່ຽນແປງ ແລະ ຢາກເປັນທີ່ຍອມຮັບຂອງຊາວໂລກ ເຫດຜົນດັ່ງກ່າວເປັນ ຄຳຕອບສຸດທ້າຍ, ແຕ່ກໍມີອີກກຸ່ມໜຶ່ງທີ່ບໍ່ໄດ້ເຫັນດີນຳໃນເລື່ອງນີ້. ການທີ່ທຳນຸງມເຫຼົ່ານີ້ “ມີແນວໂນ້ມ ຈະເປັນສະພານຂ້າມລະຫວ່າງຄຣິສຕະຈັກໂຣມກັບຝ່າຍການປະຕິຮູບ” ກໍເປັນເຫດຜົນພຽງພໍສຳລັບ ພວກເຂົາທີ່ຈະຕ້ອງປະຖິ້ມມັນໄປ.[1] ພວກເຂົາເບິ່ງຮູບແບບຕ່າງ ໆເຫຼົ່ານັ້ນວ່າ ເປັນສັນຍະລັກແຫ່ງ ຄວາມເປັນທາດ, ເຊິ່ງພວກເຂົາໄດ້ຮັບການປົດປ່ອຍມາແລ້ວ ແລະ ບໍ່ມີຄວາມປາຖະໜາທີ່ຈະກັບຄືນໄປ ເປັນທາດອີກ. ພວກເຂົາໃຫ້ເຫດຜົນວ່າ ພຣະເຈົ້າຊົງກຳນົດກົດລະບຽບຂອງການນະມັດສະການໄວ້ໃນ ພຣະຄຳຂອງພຣະອົງ; ສະນັ້ນ, ມະນຸດບໍ່ມີສິດທີ່ຈະເພີ່ມເຕີມ ຫຼື ລຶບລ້າງລາຍລະອຽດເຫຼົ່ານັ້ນ. ການ ປະຖິ້ມຄວາມເຊື່ອຄັ້ງຍິ່ງໃຫຍ່ໄດ້ເລີ່ມຕົ້ນຂຶ້ນຍ້ອນຄວາມພະຍາຍາມທີ່ຈະເສີມສິດອຳນາດຂອງພຣະເຈົ້າ ດ້ວຍສິດອຳນາດຂອງຄຣິສຕະຈັກ. ຄຣິສຕະຈັກໂຣມໄດ້ເລີ່ມຂຶ້ນໂດຍການບັງຄັບໃນສິ່ງທີ່ພຣະເຈົ້າບໍ່ໄດ້ ຫ້າມ, ແລ້ວສຸດທ້າຍ ກໍພັດຫ້າມໃນສິ່ງທີ່ພຣະອົງຊົງກຳນົດໄວ້ຢ່າງຈະແຈ້ງ. *{GC 289.2}*

ຫຼາຍຄົນມີຄວາມປາຖະໜາຢ່າງແຮງກ້າທີ່ຈະກັບຄືນໄປສູ່ຄວາມບໍຣິສຸດ ແລະ ຄວາມລຽບງ່າຍ ເຊິ່ງເປັນລັກສະນະຂອງຄຣິສຕະຈັກຍຸກທຳອິດ. ພວກເຂົາຖືວ່າທຳນຸງມປະຕິບັດຕ່າງ ໆ ທີ່ຄຣິສຕະຈັກ ແຫ່ງອັງກິດຍຶດຖືໄວ້ນັ້ນ ເປັນຮ່ອງຮອຍຂອງການຂາບໄຫວ້ຮູບເຄົາລົບ; ສະນັ້ນ, ໂດຍຈິດສຳນຶກ ຜິດຊອບແລ້ວ ພວກເຂົາຈຶ່ງບໍ່ສາມາດເຂົ້າຮ່ວມໃນການນະມັດສະການກັບຄຣິສຕະຈັກນັ້ນໄດ້. ແຕ່ ຄຣິສຕະຈັກແຫ່ງອັງກິດໄດ້ຮັບການສະໜັບສະໜູນຈາກອຳນາດການປົກຄອງ ຈຶ່ງບໍ່ອະນຸຍາດໃຫ້ມີສິ່ງ

[1] ມາຕິນ (Martyn), ເຫຼັ້ມ 5, ໜ້າ 22.

ໃດທີ່ຂັດແຍ້ງກັບຮູບແບບຕ່າງ ໆ ຂອງຄຣິສຕະຈັກ. ມີກົດໝາຍບັງຄັບໃຫ້ປະຊາຊົນເຂົ້າຮ່ວມໃນການນະມັດສະການ ແລະ ຫ້າມບໍ່ໃຫ້ມີການປະຊຸມນະມັດສະການທີ່ບໍ່ໄດ້ຮັບອະນຸຍາດ; ຫາກຜູ້ໃດຝ່າຝືນ ຈະມີໂທດຈຳຄຸກ, ເນລະເທດ ຫຼື ປະຫານຊີວິດ. {GC 290.1}

ໜີໄປຮໍແລນ

ໃນຊ່ວງເລີ່ມຕົ້ນຂອງສະຕະວັດທີ 17, ກະສັດຜູ້ທີ່ຫາກໍຂຶ້ນບັນລັງຂອງອັງກິດໄດ້ປະກາດຄວາມຕັ້ງໃຈຂອງເພິ່ນທີ່ຈະເຮັດໃຫ້ສະມາຊິກຄະນະປູຣິຕັນ (Puritans) “ປະຕິບັດຕາມຄຣິສຕະຈັກ. ຫາກບໍ່ປະຕິບັດຕາມ . . . ກໍຈະກົດດັນຈົນພວກເຂົາໜີອອກນອກປະເທດ ຫຼື ອາດຈະຮ້າຍແຮງກວ່ານັ້ນ.”[2] ຄົນເຫຼົ່ານີ້ຖືກໄລ່ລ່າ, ຖືກຂົ່ມເຫັງ ແລະ ຖືກຂັງຄຸກ; ພວກເຂົາບໍ່ເຫັນຄວາມຫວັງວ່າວັນເວລາຂ້າງໜ້າຈະດີຂຶ້ນ, ຈຶ່ງມີຫຼາຍຄົນສະຫຼຸບວ່າ ຖ້າຈະຮັບໃຊ້ພຣະເຈົ້າຕາມຈິດສຳນຶກຜິດຊອບແລ້ວ, “ປະເທດອັງກິດກຳລັງກາຍເປັນບ່ອນທີ່ພວກເຂົາບໍ່ສາມາດຢູ່ໄດ້ອີກຕໍ່ໄປ.”[3] ໃນທີ່ສຸດບາງຄົນຕັດສິນໃຈທີ່ຈະຫາລີ້ໄພໃນປະເທດຮໍແລນ, ແຕ່ກໍປະສົບກັບຄວາມຫຍຸ້ງຍາກ, ການສູນເສຍ ແລະ ການຖືກຈຳຄຸກ. ຄວາມຕັ້ງໃຈຂອງຄົນເຫຼົ່ານີ້ຖືກຂັດຂວາງ ແລະ ມີຄົນທໍລະຍົດໃຫ້ພວກເຂົາຕົກຢູ່ໃນກຳມືຂອງສັດຕູ. ແຕ່ໃນທີ່ສຸດຄວາມພາກພຽນໄດ້ຜົນ ແລະ ພວກເຂົາສາມາດພົບບ່ອນລີ້ໄພຢູ່ສາທາລະນະລັດດັດຊ໌ ກໍຄືຮໍແລນນັ້ນເອງ. {GC 290.2}

ໃນການໜີນັ້ນ ພວກເຂົາຕ້ອງປະເຮືອນຊານ, ສິ່ງຂອງ ແລະ ວິທີການທຳມາຫາກິນຂອງພວກເຂົາ, ຈົນກາຍເປັນຄົນແປກໜ້າໃນດິນແດນທີ່ແປກໃໝ່ ທ່າມກາງຄົນຕ່າງພາສາ ແລະ ຕ່າງປະເພນີວັດທະນະທຳ. ພວກເຂົາຖືກສະຖານະການບັງຄັບ ໃຫ້ຕ້ອງເຮັດວຽກໃໝ່ທີ່ບໍ່ລຶ້ງເຄີຍເພື່ອຫາລ້ຽງຊີບ. ຜູ້ຊາຍໄວກາງຄົນທີ່ເຄີຍໃຊ້ຊີວິດເຮັດໄຮ່ໄຖນາ ຕ້ອງມາຝຶກເປັນຊ່າງຝີມື. ແຕ່ພວກເຂົາຍອມຮັບສະພາບການໃໝ່ນີ້ດ້ວຍໃຈເບີກບານ ແລະ ບໍ່ໄດ້ປ່ອຍຕົວເອງໃຫ້ຢູ່ລ້າ ໆ ຫຼື ຈົ່ມເຖິງອະດີດ. ເຖິງແມ່ນວ່າຈະຖືກຄວາມຍາກຈົນບີບຄັ້ນຢູ່ເລື້ອຍ ໆ ແຕ່ພວກເຂົາຍັງຂອບຄຸນພຣະເຈົ້າສຳລັບພຣະພອນທີ່ໄດ້ຮັບ ແລະ ໄດ້ພົບຄວາມສຸກໃນການສາມັກຄີທຳໂດຍບໍ່ມີໃຜມາກໍ່ກວນ. “ຄົນເຫຼົ່ານີ້ຮູ້ວ່າ ພວກເຂົາເປັນຄົນແປກໜ້າທີ່ກຳລັງສະແຫວງຫາພຣະພອນຈາກພຣະເຈົ້າ ຈຶ່ງບໍ່ໄດ້ໃສ່ໃຈໃນຄວາມຍາກລຳບາກທີ່ຕ້ອງປະເຊີນ; ແຕ່ກັບເງີຍໜ້າຂຶ້ນໄປຫາສະຫວັນ ອັນເປັນແຜ່ນດິນທີ່ຮັກ ແລະ ປາຖະໜາຂອງພວກເຂົາ; ຄວາມຫຍຸ້ງຍາກໃນໃຈຈຶ່ງສະຫງົບລົງ.”[4] {GC 290.3}

ທ່າມກາງການຫຼົບໄພໃນຕ່າງແດນ ແລະ ຄວາມຍາກລຳບາກນັ້ນ, ຄວາມຮັກ ແລະ ຄວາມເຊື່ອຂອງພວກເຂົາຈະເລີນເຂັ້ມແຂງຂຶ້ນ. ພວກເຂົາໄວ້ວາງໃຈໃນພຣະສັນຍາຂອງພຣະເຈົ້າ ແລະ ພຣະອົງບໍ່ໄດ້ເຮັດໃຫ້ພວກເຂົາຜິດຫວັງໃນຍາມທີ່ຕ້ອງການຄວາມຊ່ວຍເຫຼືອ. ທູດສະຫວັນຂອງພຣະອົງຢູ່ຄຽງຂ້າງພວກເຂົາ ເພື່ອໃຫ້ກຳລັງໃຈ ແລະ ສະໜັບສະໜູນ. ແລ້ວເມື່ອພຣະຫັດຂອງພຣະເຈົ້າເບິ່ງຄືວ່າ ກຳລັງຊີ້ໃຫ້ພວກເຂົາຂ້າມມະຫາສະໝຸດໄປຫາດິນແດນທີ່ຈະສາມາດກໍ່ຕັ້ງລັດຂຶ້ນສຳລັບພວກຕົນ ອັນເປັນບ່ອນທີ່ຈະຝາກມໍລະດົກອັນລ້ຳຄ່າແຫ່ງເສລີພາບທາງສາສະໜາໄວ້ໃຫ້ລູກຫຼານນັ້ນ, ພວກເຂົາໄດ້ກ້າວໄປຂ້າງໜ້າ ຕາມການຊີ້ນຳຂອງພຣະເຈົ້າ ໂດຍບໍ່ທໍ້ຖອຍ. {GC 291.1}

---

[2] ຈອດຈ໌ ບານຄຣອບ (George Bancroft), *ປະຫວັດສາດຂອງສະຫະລັດອາເມຣິກາ*, ພາກ 1, ບົດ 12, ວັກ 6.

[3] ເຈ. ຈີ. ພາມພີ (J. G. Palfrey), *ປະຫວັດນິວອິງແລນ*, ບົດ 3, ວັກ 43.

[4] ບານຄຣອບ, ພາກ 1, ບົດ 12, ວັກ 15.

ຈຸດປະສົງຂອງການທົດລອງ

ພຣະເຈົ້າຊົງຍອມໃຫ້ຄົນຂອງພຣະອົງຕ້ອງປະສົບກັບການທົດລອງ ເພື່ອກຽມພວກເຂົາໃຫ້ພ້ອມສຳລັບ ພຣະປະສົງແຫ່ງພຣະຄຸນຂອງພຣະອົງ. ພຣະອົງຊົງໃຫ້ຄຣິສຕະຈັກມາເຖິງຈຸດທີ່ຕົກຕ່ຳ ເພື່ອພຣະອົງ ຈະຊົງຍົກຊູໃຫ້ສູງຂຶ້ນ. ພຣະເຈົ້າກຳລັງຈະສຳແດງອຳນາດຂອງພຣະອົງເພື່ອຄົນຂອງພຣະອົງ, ເພື່ອໃຫ້ ໂລກມີຫຼັກຖານອີກຢ່າງໜຶ່ງວ່າ ພຣະອົງຈະບໍ່ປະຖິ້ມຜູ້ທີ່ໄວ້ວາງໃຈໃນພຣະອົງ. ພຣະອົງຊົງແຊກແຊງ ສະຖານະການ ເພື່ອປ່ຽນຄວາມມຸ່ງຮ້າຍຂອງຊາຕານ ແລະ ແຜນອຸບາຍຂອງຄົນຊົ່ວ ໃຫ້ກາຍເປັນສິ່ງທີ່ ຖວາຍກຽດແດ່ພຣະອົງ ແລະ ນຳພາຄົນຂອງພຣະອົງໄປສູ່ບ່ອນທີ່ປອດໄພ. ການຂົ່ມເຫັງ ແລະ ການ ຫຼົບລີ້ໜີໄພໃນຕ່າງແດນ ໄດ້ເປີດທາງສູ່ອິດສະຫຼະພາບ. *{GC 291.2}*

ຄຳສັ່ງເສຍຂອງ ຈອນ ໂຣບິນສັນ

ເມື່ອຖືກສະຖານະການບີບໃຫ້ຕ້ອງແຍກອອກຈາກຄຣິສຕະຈັກແຫ່ງອັງກິດ, ພວກຄະນະປູຣິຕັນໄດ້ ເຮັດສັນຍາອັນໝັ້ນຄົງຕໍ່ກັນໃນຖານະປະຊາຄົນອິດສະຫຼະຂອງພຣະເຈົ້າ, "ເພື່ອດຳເນີນໄປພ້ອມກັນ ຕາມທາງຂອງພຣະອົງ ໃນທຸກລາຍລະອຽດທີ່ຊົງສຳແດງ ແລະ ທີ່ຈະຊົງສຳແດງແກ່ພວກເຂົາ."[5] ນີ້ ແມ່ນຫົວໃຈທີ່ແທ້ຈິງຂອງການປະຕິຮູບ, ເປັນຫຼັກການສຳຄັນຂອງໂປຣແຕັສຕັງ. ເພາະເຫດນີ້, ພວກກຸ່ມ ປິ ນ ກ ຣິ ມ (Pilgrims) ຈຶ່ງອອກຈາກຮໍແລນເພື່ອຊອກຫາບ້ານຢູ່ໃນທະວີບໃໝ່. ອາຈານຂອງພວກເຂົາ ຊື່ ຈອນ ໂຣບິນສັນ; ເພິ່ນຖືກພຣະເຈົ້າຂັດຂວາງບໍ່ໃຫ້ຮ່ວມເດີນທາງໄປດ້ວຍ; ໃນຄຳປາໄສອຳລາພວກ ທີ່ຈະໄປລີ້ໄພນັ້ນ ເພິ່ນກ່າວວ່າ: *{GC 291.3}*

"ພີ່ນ້ອງເອີຍ, ບັດນີ້ພວກເຮົາຕ້ອງພາກຈາກກັນແລ້ວ ແລະ ພຣະເຈົ້າຊົງຮູ້ວ່າຂ້າພະເຈົ້າຈະມີຊີວິດ ຢູ່ ເພື່ອເຫັນໜ້າຂອງພວກເຈົ້າອີກຫຼືບໍ່. ແຕ່ບໍ່ວ່າອົງພຣະຜູ້ເປັນເຈົ້າຈະຊົງໂຜດໃຫ້ພວກເຮົາໄດ້ພົບກັນ ອີກຫຼືບໍ່, ຂ້າພະເຈົ້າຂໍສັ່ງເຈົ້າທັງຫຼາຍຕໍ່ພຣະພັກພຣະເຈົ້າ ແລະ ຕໍ່ໜ້າບັນດາທູດສະຫວັນບໍຣິສຸດ ຂອງພຣະອົງວ່າ ໃຫ້ຕິດຕາມຂ້າພະເຈົ້າສະເພາະໃນເລື່ອງທີ່ຂ້າພະເຈົ້າໄດ້ຕິດຕາມພຣະຄຣິສ. ຖ້າຫາກ ວ່າ ພຣະເຈົ້າຊົງເປີດເຜີຍສິ່ງໃດສິ່ງໜຶ່ງໃຫ້ພວກເຈົ້າ ໂດຍຜ່ານຜູ້ຮັບໃຊ້ຄົນອື່ນຂອງພຣະອົງ, ຈົ່ງ ມີໃຈພ້ອມທີ່ຈະຮັບສິ່ງນັ້ນ ເໝືອນດັ່ງທີ່ພວກເຈົ້າມີໃຈພ້ອມມາຕະຫຼອດ ທີ່ຈະຮັບເອົາຄວາມຈິງ ທີ່ຂ້າພະເຈົ້າໄດ້ບອກສອນ; ເພາະຂ້າພະເຈົ້າໝັ້ນໃຈຫຼາຍທີ່ສຸດວ່າ ອົງພຣະຜູ້ເປັນເຈົ້າມີຫຼັກຄວາມ ຈິງເພີ່ມເຕີມ ແລະ ຄວາມສະຫວ່າງຫຼາຍກວ່າເກົ່າ ທີ່ຈະເປີດເຜີຍຢູ່ໃນພຣະຄຳອັນສັກສິດຂອງ ພຣະອົງ."[6] *{GC 291.4}*

"ສ່ວນຕົວຂ້າພະເຈົ້າແລ້ວ, ບໍ່ສາມາດຮ້ອງທຸກໃນເລື່ອງສະພາບຂອງຄຣິສຕະຈັກຝ່າຍການປະຕິຮູບ ໄດ້ເທົ່າທີ່ຄວນ; ເພາະພວກເຂົາຄືກັບວ່າ ໄດ້ຂຽນໝາຍຈ້ຳຢູ່ທ້າຍປະໂຫຍກໃນເລື່ອງສາສະໜາ ເໝືອນ ກັບວ່າຄຳສອນຈົບພຽງເທົ່ານັ້ນ ຈຶ່ງບໍ່ຍອມກ້າວໄປໄກກວ່າຜູ້ນຳການປະຕິຮູບ. ພວກຄະນະລູເທີແຮນ ບໍ່ກ້າວໄປໄກກວ່າສິ່ງທີ່ລູເທີໄດ້ເຫັນ; . . . ພວກເຈົ້າກໍເຫັນຢູ່ວ່າ ພວກຄະນະຄາວິນຈົມຕິດຢູ່ກັບບ່ອນທີ່ ຄາວິນຜູ້ຮັບໃຊ້ທີ່ຍິ່ງໃຫຍ່ຂອງພຣະເຈົ້າໄດ້ມອບໝາຍໃຫ້, ແຕ່ວ່າຄາວິນບໍ່ໄດ້ເຂົ້າໃຈທຸກຢ່າງ. ເລື່ອງນີ້ເປັນ ເຫດໃຫ້ເສົ້າໃຈຫຼາຍທີ່ສຸດ, ເພາະເຖິງແມ່ນວ່າ ພວກຜູ້ນຳເຫຼົ່ານັ້ນເຄີຍສ່ອງແສງສະຫວ່າງໃນຍຸກສະໄໝ ຂອງຕົນ ແຕ່ພວກເຂົາບໍ່ສາມາດເຂົ້າເຖິງນ້ຳພຣະໄທທັງໝົດຂອງພຣະເຈົ້າໄດ້. ຖ້າຫາກວ່າຄົນເຫຼົ່ານັ້ນ

[5] ເຈ. ບຣາວ (J. Brown), *ກຸ່ມປິ ນ ກ ຣິ ມ ລຸ ້ ນ ບຸ ກ ເ ບີ ກ*, ໜ້າ 74.

[6] ມາຕິນ (Martyn), ເຫຼັ້ມ 5, ໜ້າ 70.

ມີຊີວິດຢູ່ໃນເວລານີ້, ພວກເພິ່ນຈະເຕັມໃຈຮັບເອົາຄວາມສະຫວ່າງຕື່ມອີກ ເໝືອນດັ່ງທີ່ຕົນໄດ້ຮັບຄວາມສະຫວ່າງໃນສະໄໝກ່ອນ."[7] *{GC 292.1}*

"ຈົ່ງຈື່ຈຳພັນທະສັນຍາໃນການຮວມຕົວເປັນຄຣິສຕະຈັກຂອງພວກເຈົ້າ; ເຊິ່ງໃນນັ້ນ, ເຈົ້າທັງຫຼາຍໄດ້ຕົກລົງກັນທີ່ຈະດຳເນີນຕາມທາງທັງຫຼາຍຂອງພຣະເຈົ້າໃນທຸກລາຍລະອຽດ ທັງທີ່ຊົງເປີດເຜີຍແລ້ວ ແລະ ທີ່ຈະເປີດເຜີຍໃຫ້ແກ່ພວກເຈົ້າໃນເວລາຕໍ່ມາ. ຈົ່ງຈື່ຈຳຄຳສັນຍາຂອງພວກເຈົ້າທີ່ມີຕໍ່ພຣະເຈົ້າ ແລະ ພັນທະສັນຍາທີ່ມີຕໍ່ກັນແລະກັນວ່າ ຈະຮັບເອົາຄວາມສະຫວ່າງ ແລະ ຄວາມຈິງໃດໆ ທີ່ພຣະເຈົ້າຈະຊົງສຳແດງຈາກພຣະຄຳຂອງພຣະອົງ. ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າຂໍຮ້ອງພວກເຈົ້າທັງຫຼາຍວ່າ ກ່ອນທີ່ຈະຮັບເອົາສິ່ງໃດເປັນຄວາມຈິງ ຈົ່ງປຽບທຽບສິ່ງນັ້ນກັບຂໍ້ພຣະຄຳພີອື່ນໆ; ເພາະວ່າເປັນໄປບໍ່ໄດ້ ທີ່ກຸ່ມຄຣິສຕຽນທົ່ວໂລກຈະອອກຈາກຄວາມມືດມິດທີ່ປົກຄຸມຄຳສອນຄຣິສຕຽນ ແລ້ວມາເຖິງຄວາມເຂົ້າໃຈຢ່າງສົມບູນໄດ້ທັນທີ."[8] *{GC 292.2}*

ເຂົ້າໃຈຜິດເລື່ອງອິດສະຫຼະພາບທາງຄວາມເຊື່ອ

ພວກກຸ່ມປົນກຣິມປາຖະໜາທີ່ຈະມີເສລີພາບທາງຈິດສຳນຶກ; ສະນັ້ນ, ໂດຍອາໄສພຣະພອນຈາກພຣະເຈົ້າ, ພວກເຂົາຈຶ່ງກ້າສ່ຽງຕໍ່ໄພອັນຕະລາຍໃນການເດີນທາງອັນຍາວໄກເພື່ອຂ້າມມະຫາສະໝຸດ ແລະ ຄວາມທຸກຍາກລຳບາກ ພ້ອມດ້ວຍໄພອັນຕະລາຍໃນປ່າ ເພື່ອວາງຮາກຖານຂອງປະເທດຊາດທີ່ຍິ່ງໃຫຍ່ຢູ່ແຄມຝັ່ງທະເລຂອງທະວີບອາເມຣິກາ. ຢ່າງໃດກໍຕາມ, ເຖິງແມ່ນພວກປົນກຣິມເປັນກຸ່ມຄົນທີ່ມີຄວາມສັດຊື່ ແລະ ຢຳເກງພຣະເຈົ້າຫຼາຍຂະໜາດນັ້ນກໍຕາມ, ແຕ່ພວກເຂົາກໍຍັງບໍ່ເຂົ້າໃຈຫຼັກການສຳຄັນເລື່ອງເສລີພາບທາງສາສະໜາ. ພວກເຂົາເສຍສະຫຼະຢ່າງໃຫຍ່ຫຼວງເພື່ອຈະໄດ້ອິດສະຫຼະພາບ, ແຕ່ໃນຂະນະດຽວກັນ, ກໍບໍ່ພ້ອມທີ່ຈະໃຫ້ຄົນອື່ນມີອິດສະຫຼະພາບເໝືອນກັບຕົນ. "ມີໜ້ອຍຄົນ, ແມ່ນແຕ່ທ່ານກາງນັກຄິດ ແລະ ຄົນສອນສິນທຳທີ່ສຳຄັນທີ່ສຸດໃນສະຕະວັດທີ 17 ທີ່ເຂົ້າໃຈເຖິງຫຼັກທຳອັນຍິ່ງໃຫຍ່ ເຊິ່ງມາຈາກພຣະຄຳພີໃໝ່, ຄືຫຼັກທຳທີ່ຍອມຮັບວ່າ ພຣະເຈົ້າເປັນຜູ້ດຽວເທົ່ານັ້ນທີ່ຕັດສິນຄວາມເຊື່ອສັດທາຂອງມະນຸດໄດ້."[9] ຄຳສອນທີ່ວ່າ ພຣະເຈົ້າຊົງມອບສິດໃຫ້ຄຣິສຕະຈັກໃນການຄວບຄຸມຈິດສຳນຶກຜິດຊອບ, ກຳນົດວ່າສິ່ງໃດເປັນຄຳສອນນອກຮີດ ແລະ ລົງໂທດຜູ້ທີ່ເຊື່ອຕາມຄຳສອນນັ້ນ ແມ່ນໜຶ່ງໃນຄຳສອນເທັດທີ່ຢັ່ງຮາກລົງເລິກທີ່ສຸດຂອງລະບອບສັນຕະປາປາ. ເຖິງແມ່ນວ່າ ພວກນັກປະຕິຮູບໄດ້ປະຕິເສດຄຳສອນຂອງຄຣິສຕະຈັກໂຣມ ແຕ່ພວກເຂົາຍັງມີຄວາມຄິດຄວາມອ່ານເໝືອນຄົນໃນຄຣິສຕະຈັກນັ້ນ ທີ່ບໍ່ຍອມໃຫ້ມີຄວາມເຫັນຕ່າງ. ຄວາມມືດມິດຢ່າງໜາທຶບ ເຊິ່ງປົກຄຸມຄຣິສຕຽນໃນທຸກແຫ່ງຕາມເວລາອັນດົນນານທີ່ລະບອບສັນຕະປາປາມີອຳນາດນັ້ນ ຍັງບໍ່ໄດ້ຖືກກຳຈັດໃຫ້ໝົດໃນເວລານັ້ນ. ມີສາສະໜາຈານທີ່ໂດດເດັ່ນຄົນໜຶ່ງໃນອານານິຄົມແຫ່ງອ່າວແມັສຊາຊູເສັດ (Massachusetts Bay Colony) ກ່າວວ່າ: "ສິ່ງທີ່ເຮັດໃຫ້ໂລກຕໍ່ຕ້ານຄຣິສຕຽນ ຄືການຍອມຮັບຄົນເຫັນຕ່າງ; ຄຣິສຕະຈັກບໍ່ເຄີຍໄດ້ຮັບຄວາມເສຍຫາຍຈາກການລົງໂທດຄົນນອກຮີດ."[10] ຊາວອານານິຄົມຕັ້ງກົດລະບຽບວ່າ ມີແຕ່ສະມາຊິກຄຣິສຕະຈັກເທົ່ານັ້ນ ທີ່ມີສິດອອກສຽງໃນເລື່ອງການປົກຄອງພົນລະເມືອງ. ມີການສ້າງຕັ້ງຄຣິສຕະຈັກທີ່ມີລັກສະນະຄ້າຍຄືຄຣິສຕະຈັກແຫ່ງລັດຂຶ້ນ ໂດຍປະຊາຊົນທັງໝົດຕ້ອງປະກອບສ່ວນໃນການສະໜັບສະໜູນເງິນເດືອນຂອງສາສະໜາຈານ. ສ່ວນເຈົ້າໜ້າທີ່ຝ່າຍການປົກຄອງ ກໍໄດ້ຮັບ

[7] ດີ. ນຽວ (D. Neal), *ປະຫວັດສາດຂອງຄະນະປູຣິຕັນ* ເຫຼັ້ມ 1, ໜ້າ 269.

[8] ມາຕິນ (Martyn), ເຫຼັ້ມ 5, ໜ້າ 70, 71.

[9] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 5, ໜ້າ 297.

[10] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 5, ໜ້າ 335.

ອະນຸຍາດໃຫ້ປາບປາມຄົນທີ່ເຊື່ອຖືຄຳສອນນອກຮີດ. ດັ່ງນັ້ນ, ອຳນາດການປົກຄອງຈຶ່ງຕົກຢູ່ໃນກຳມືຂອງຄຣິສຕະຈັກ. ເວລາຜ່ານໄປບໍ່ດົນ ຜົນຂອງນະໂຍບາຍນີ້ຈຶ່ງປາກົດອອກມາຢ່າງຫຼີກລ່ຽງບໍ່ໄດ້ ຄື ການກົດຂີ່ຂົ່ມເຫັງນັ້ນເອງ. {GC 292.3}

ສິບເອັດປີຫຼັງຈາກການສ້າງຕັ້ງອານານິຄົມແຫ່ງທຳອິດ ອາຈານ ໂຣເຈີ ວິນລຽມ (Roger Williams) ໄດ້ມາເຖິງອາເມຣິກາ. ເຊັ່ນດຽວກັບກຸ່ມປົ້ນກຣົມລຸ້ນທຳອິດ ວິນລຽມໄດ້ມາເພື່ອຈະມີເສລີພາບທາງສາສະໜາ; ແຕ່ມີເລື່ອງໜຶ່ງທີ່ເພິ່ນບໍ່ເໝືອນພວກເຂົາ, ຍ້ອນວ່າເພິ່ນໄດ້ເຫັນໃນສິ່ງທີ່ມີໜ້ອຍຄົນໃນສະໄໝນັ້ນເຫັນ ນັ້ນຄືເສລີພາບທາງສາສະໜາເປັນສິດທິພື້ນຖານຂອງມະນຸດທຸກຄົນ ບໍ່ວ່າຈະມີຄວາມເຊື່ອຖືຢ່າງໃດກໍຕາມ. ເພິ່ນເປັນຜູ້ສະແຫວງຫາຄວາມຈິງຢ່າງກະຕືລືລົ້ນ ແລະ ມີຄວາມເຊື່ອດຽວກັນກັບອາຈານໂຣບິນສັນທີ່ວ່າ ມະນຸດຍັງບໍ່ໄດ້ຮັບແສງສະຫວ່າງທັງໝົດຈາກພຣະຄຳຂອງພຣະເຈົ້າເທື່ອ. ວິນລຽມ “ເປັນຄຣິສຕຽນຄົນທຳອິດໃນຍຸກສະໄໝໃໝ່ ທີ່ໄດ້ສ້າງຕັ້ງລັດຖະບານພົນລະເມືອງຂຶ້ນຕາມຫຼັກການເສລີພາບທາງຈິດສຳນຶກ, ໂດຍໃນແງ່ຂອງກົດໝາຍແລ້ວ ທຸກຄວາມຄິດເຫັນມີຄວາມເທົ່າທຽມກັນ.”[11] ເພິ່ນປະກາດວ່າ ເຈົ້າໜ້າທີ່ຝ່າຍປົກຄອງມີໜ້າທີ່ທີ່ຈະຢັບຢັ້ງອາດຊະຍາກຳ, ແຕ່ບໍ່ມີໜ້າທີ່ໃນການຄວບຄຸມຈິດສຳນຶກຜິດຊອບ. ວິນລຽມກ່າວວ່າ, “ປະຊາຊົນ ຫຼື ເຈົ້າໜ້າທີ່ຝ່າຍປົກຄອງສາມາດຕັດສິນໃຈວ່າ ມະນຸດດ້ວຍກັນຕ້ອງມີຄວາມຮັບຜິດຊອບຕໍ່ກັນຢ່າງໃດ; ແຕ່ເປັນເລື່ອງບໍ່ປອດໄພ ຖ້າພວກເຂົາຈະພະຍາຍາມກຳນົດໜ້າທີ່ຂອງມະນຸດຕໍ່ພຣະເຈົ້າ ຍ້ອນວ່າບໍ່ມີສິດ; ເພາະວ່າເປັນສິ່ງທີ່ປາກົດໃຫ້ເຫັນຢ່າງຈະແຈ້ງວ່າ ຖ້າຫາກຜູ້ປົກຄອງມີອຳນາດດັ່ງກ່າວ, ເພິ່ນອາດຈະກຳນົດແນວຄິດຢ່າງໜຶ່ງໃຫ້ທຸກຄົນເຊື່ອໃນມື້ນີ້ ແລ້ວມື້ອື່ນອາດປ່ຽນເປັນເລື່ອງໃໝ່, ຕາມທີ່ກະສັດ ແລະ ຣາຊີນີ ຫຼາຍອົງໄດ້ປະຕິບັດກັນມາໃນປະເທດອັງກິດ, ພ້ອມດ້ວຍພວກສັນຕະປາປາ ແລະ ສະພາທັງຫຼາຍຂອງຄຣິສຕະຈັກໂຣມ ຈົນຄວາມເຊື່ອສັດທາກາຍເປັນເລື່ອງທີ່ສັບສົນວຸ້ນວາຍ.”[12] {GC 293.1}

ໃນ ສະໄໝ ນັ້ນ ມີການ ບັງຄັບ ໃຫ້ ເຂົ້າຮ່ວມ ນະມັດສະການ ໃນ ຄຣິສຕະຈັກ ທີ່ ຖືກ ຮັບຮອງ ຈາກ ລັດຖະບານ, ຫາກ ຜູ້ໃດ ຝ່າຝືນ ກໍ ມີ ໂທດ ປັບ ໃໝ ຫຼື ຈຳຄຸກ. “ວິນລຽມ ຄັດຄ້ານ ກົດໝາຍ ນີ້ ຢ່າງ ເດັດດ່ຽວ; ກົດໝາຍ ທີ່ ຮ້າຍແຮງ ທີ່ສຸດ ໃນ ປະມວນ ກົດໝາຍ ຂອງ ອັງກິດ ແມ່ນ ກົດໝາຍ ທີ່ ບັງຄັບ ໃຫ້ ເຂົ້າຮ່ວມ ຄຣິສຕະຈັກ ປະຈຳ ທ້ອງຖິ່ນ. ເພິ່ນ ເຫັນ ວ່າ ການ ບັງຄັບ ໃຫ້ ຄົນ ເຂົ້າຮ່ວມ ກັບ ຄົນ ທີ່ ມີ ຄວາມ ເຊື່ອ ຕ່າງ ກັນ ເປັນ ການ ລະເມີດ ສິດ ທິ ພື້ນ ຖານ ຂອງ ມະນຸດ ຢ່າງ ໂຈ່ງ ແຈ້ງ; ການ ບັງ ຄັບ ຄົນ ທີ່ ບໍ່ ມີ ສາ ສະ ໜາ ແລະ ຄົນ ທີ່ ບໍ່ ເຕັມ ໃຈ ໃຫ້ ມາ ຮ່ວມ ນະ ມັດ ສະ ການ ກໍ ບໍ່ ຕ່າງ ຫຍັງ ກັບ ການ ບັງ ຄັບ ໃຫ້ ຄົນ ເຮັດ ແບບ ໜ້າ ໄຫວ້ ຫຼັງ ຫຼອກ. . . . ເພິ່ນ ກ່າວ ຕື່ມ ວ່າ, ‘ບໍ່ ຄວນ ມີ ໃຜ ຖືກ ບັງ ຄັບ ໃຫ້ ນະ ມັດ ສະ ການ ຫຼື ຮັກ ສາ ການ ນະ ມັດ ສະ ການ ອັນ ໃດ ທີ່ ເຈົ້າ ຕົວ ບໍ່ ຍິນ ດີ ນຳ.’ ພວກ ຄູ່ ຕໍ່ ສູ້ ຕອບ ດ້ວຍ ຄວາມ ປະ ຫຼາດ ໃຈ ໃນ ຄວາມ ຄິດ ເຫັນ ຂອງ ເພິ່ນ ວ່າ: ‘ແມ່ນ ຫຍັງ ກັນ ນີ້! ຜູ້ ອອກ ແຮງ ງານ ບໍ່ ສົມ ຄວນ ໄດ້ ຮັບ ຄ່າ ຈ້າງ ບໍ?’ ເພິ່ນ ຕອບ ວ່າ: ‘ຄວນ ແທ້, ແຕ່ ຕ້ອງ ໄດ້ ຮັບ ຈາກ ຜູ້ ທີ່ ຈ້າງ ລາວ ເທົ່ານັ້ນ.’”[13] {GC 294.1}

ໂຣເຈີ ວິນລຽມ ເບີກທາງສູ່ສິດທິ

ໂຣເຈີ ວິນລຽມ ເປັນທີ່ເຄົາລົບນັບຖື ແລະ ເປັນທີ່ຮັກແພງໃນຖານະສາສະໜາຈານທີ່ສັດຊື່; ເພິ່ນເປັນຄົນທີ່ມີຄວາມສາມາດທີ່ຫາໄດ້ຍາກ, ມີຄວາມສັດຊື່ທີ່ບໍ່ອ່ຽງເອນ ແລະ ມີຈິດໃຈໂອບອ້ອມອາລີຢ່າງແທ້ຈິງ; ເຖິງຢ່າງໃດກໍຕາມ, ຝ່າຍອຳນາດການປົກຄອງ ບໍ່ສາມາດທົນໄດ້ທີ່ເພິ່ນຮຽກຮ້ອງເລື່ອງ

[11] ບານຄຣອບ, ພາກ 1, ບົດ 15, ວັກ 16.
[12] ມາຕິນ (Martyn), ເຫຼັ້ມ 5, ໜ້າ 340.
[13] ບານຄຣອບ, ພາກ 1, ບົດ 15, ວັກ 2.

ເສລີພາບທາງສາສະໜາ ແລະ ສອນວ່າເຈົ້າໜ້າທີ່ລັດບໍ່ມີອຳນາດໃນເລື່ອງທີ່ເປັນຂອງຄຣິສຕະຈັກ. ພວກເຈົ້າໜ້າທີ່ຢືນຢັນວ່າ ຖ້າປະຕິບັດຕາມຄຳສອນໃໝ່ນີ້ ຈະເປັນການ “ທຳລາຍຮາກຖານຂອງອຳນາດລັດ ແລະ ການປົກຄອງແຜ່ນດິນ.”[14] ວິນລຽມຖືກເນລະເທດອອກຈາກເຫຼົ່າອານານິຄົມ; ຈົນໃນທີ່ສຸດ ເພື່ອຫຼີກລ່ຽງການຖືກຈັບກຸມ, ເພິ່ນຕ້ອງຫຼົບໜີໄປທ່າມກາງຄວາມໜາວເຢັນ ແລະ ພະຍຸຂອງ ລະດູໜາວ, ເຂົ້າໄປໃນປ່າດົງທີ່ຍັງບໍ່ມີຜູ້ໃດບຸກເບີກ. *{GC 294.2}*

ເພິ່ນກ່າວວ່າ: “ເປັນເວລາ 14 ອາທິດ, ຂ້າພະເຈົ້າຢູ່ກັບຄວາມໜາວເຫັບ, ບໍ່ຮູ້ຈັກຮອດເຂົ້າຈີ່ ຫຼື ຕຽງນອນ.” ແຕ່ “ພວກນົກກາໄດ້ລ້ຽງດູຂ້າພະເຈົ້າໃນປ່າດົງນັ້ນ” ແລະ ມີໂພງໄມ້ເປັນບ່ອນພັກອາໄສ.[15] ດັ່ງນີ້ແຫຼະ, ເພິ່ນຈຶ່ງຝ່າຟັນໄປຂ້າງໜ້າຢ່າງເຈັບປວດ, ຜ່ານຫີມະ ແລະ ປ່າໄມ້ ທີ່ບໍ່ມີເສັ້ນທາງ, ຈົນໄດ້ພົບບ່ອນລີ້ໄພກັບຊົນເຜົ່າອິນເດຍແດງທີ່ໄວ້ເນື້ອເຊື່ອໃຈເພິ່ນ ຍ້ອນວ່າເພິ່ນເຄີຍ ພະຍາຍາມປະກາດຫຼັກຄວາມຈິງແຫ່ງຂ່າວປະເສີດໃຫ້ກັບພວກເຂົາ. *{GC 294.3}*

ໃນທີ່ສຸດ, ຫຼັງຈາກໄດ້ເດີນທາງຫຼາຍເດືອນໂດຍບໍ່ຮູ້ຈຸດໝາຍປາຍທາງ, ລະດູການກໍ່ປ່ຽນແປງ ແລະ ເພິ່ນໄດ້ໄປເຖິງແຄມຝັ່ງອ່າວນາຮາກັນເສັດ ບ່ອນທີ່ເພິ່ນໄດ້ວາງຮາກຖານຂອງລັດແຫ່ງທຳອິດໃນ ຍຸກສະໄໝໃໝ່ ເຊິ່ງໄດ້ຮັບຮູ້ສິດທິຂອງເສລີພາບທາງສາສະໜາຢ່າງເຕັມທີ່. ຫຼັກການພື້ນຖານອານານິຄົມ ຂອງ ໂຣເຈີ ວິນລຽມ ແມ່ນ “ມະນຸດທຸກຄົນຄວນມີເສລີພາບໃນການນະມັດສະການພຣະເຈົ້າຕາມ ຈິດສຳນຶກຜິດຊອບຂອງຕົນເອງ.”[16] ລັດນ້ອຍໆຂອງເພິ່ນຊື່ວ່າ ໂຣດໄອແລນ (Rhode Island) ໄດ້ ກາຍເປັນບ່ອນລີ້ໄພຂອງຜູ້ທີ່ຖືກການກົດຂີ່ຂົ່ມເຫັງ ແລະ ໄດ້ຈະເລີນຮຸ່ງເຮືອງຂຶ້ນ ຈົນໃນທີ່ສຸດຫຼັກການ ພື້ນຖານເລື່ອງສິດທິບຸກຄົນ ແລະ ເສລີພາບທາງສາສະໜາ ໄດ້ກາຍເປັນເສົາຫຼັກຂອງສາທາລະນະລັດ ອາເມຣິກາ. *{GC 295.1}*

ໃນຄຳປະກາດເອກະລາດ ເຊິ່ງເປັນເອກະສານເກົ່າແກ່ ແລະ ຍິ່ງໃຫຍ່ນັ້ນ ຊາວອາເມຣິກາລຸ້ນ ບຸກເບີກ[17] ໄດ້ຢືນຢັດເຖິງສິດທິຂອງພວກເຂົາວ່າ: “ພວກເຮົາຖືວ່າຄວາມຈິງເຫຼົ່ານີ້ເປັນສິ່ງທີ່ປະຈັກແຈ້ງ ດ້ວຍຕົວຂອງມັນເອງຄື ມະນຸດທຸກຄົນຖືກສ້າງຂຶ້ນມາຢ່າງເທົ່າທຽມກັນ ແລະ ໄດ້ຮັບສິດທິທີ່ບໍ່ສາມາດ ຖອນຄືນໄດ້ຈາກພຣະຜູ້ສ້າງຂອງພວກເຂົາ ເຊິ່ງໃນນັ້ນລວມສິດທິໃນການມີຊີວິດ, ສິດທິໃນເສລີພາບ, ແລະ ສິດທິໃນການຕາມຫາຄວາມສຸກ.” ນອກຈາກນັ້ນ, ລັດຖະທຳມະນູນຍັງໄດ້ຮັບປະກັນດ້ວຍຖ້ອຍຄຳ ທີ່ຈະແຈ້ງທີ່ສຸດວ່າ ຈິດສຳນຶກຜິດຊອບເປັນສິ່ງສັກສິດທີ່ບໍ່ສາມາດລະເມີດໄດ້, ໂດຍກ່າວວ່າ: “ຈະບໍ່ມີການ ທົດສອບທາງສາສະໜາເປັນເງື່ອນໄຂສຳລັບການດຳລົງຕຳແໜ່ງ ຫຼື ໜ້າທີ່ສາທາລະນະໃດໆພາຍໃຕ້ ສະຫະລັດອາເມຣິກາ.” “ສະພາຈະບໍ່ອອກກົດໝາຍກ່ຽວກັບການສະຖາປະນາສາສະໜາ ຫຼື ຫ້າມ ການປະຕິບັດສາສະໜາຢ່າງອິດສະຫຼະ.” *{GC 295.2}*

“ຄົນທັງຫຼາຍທີ່ຮ່າງລັດຖະທຳມະນູນຮັບຮູ້ຫຼັກທຳອັນເປັນນິຣັນວ່າ ຄວາມສຳພັນລະຫວ່າງມະນຸດກັບ ພຣະເຈົ້າຂອງຕົນ ແມ່ນເລື່ອງທີ່ເໜືອກົດໝາຍຂອງມະນຸດ ແລະ ສິດທິຂອງຄວາມສຳນຶກຜິດຊອບເປັນ ສິ່ງສັກສິດທີ່ບໍ່ສາມາດລະເມີດໄດ້. ສັດຈະທຳຂໍ້ນີ້ບໍ່ຕ້ອງອາໄສການອະທິບາຍເປັນເຫດເປັນຜົນ ເພາະ ເປັນເລື່ອງທີ່ມະນຸດເຮົາທຸກຄົນຮັບຮູ້ພາຍໃນຈິດໃຈຂອງຕົວເອງຢູ່ແລ້ວ. ການສຳນຶກເຖິງສັດຈະທຳຂໍ້ ນີ້ ໄດ້ເປັນກຳລັງໃຈໃຫ້ກັບຄົນທັງຫຼາຍທີ່ຖືກຂ້າ ຫຼື ຖືກທໍລະມານຍ້ອນຄວາມເຊື່ອທີ່ຂັດຕໍ່ກົດໝາຍຂອງ ມະນຸດ. ພວກເຂົາຮູ້ສຶກວ່າ ໜ້າທີ່ຂອງຕົນທີ່ມີຕໍ່ພຣະເຈົ້າສຳຄັນກວ່າຂໍ້ກຳນົດຂອງມະນຸດ ແລະ ມະນຸດ

[14] *ອ້າງອີງຈາກທີ່ດຽວກັນ*, ພາກ 1, ບົດ 15, ວັກ 10.

[15] ມາຕິນ (Martyn), ເຫຼັ້ມ 5, ໜ້າ 349, 350.

[16] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 5, ໜ້າ 354.

[17] ຕົ້ນສະບັບຂຽນວ່າ “ບັນພະບຸລຸດຂອງພວກເຮົາ,” ເນື່ອງຈາກຜູ້ຂຽນເປັນຊາວອາເມຣິກາ.

ບໍ່ສາມາດໃຊ້ສິດອຳນາດເໜືອຈິດສຳນຶກຜິດຊອບຂອງຕົນ. ນີ້ເປັນຫຼັກການທີ່ເກີດມາພ້ອມກັບຄົນ ເຊິ່ງ ບໍ່ມີສິ່ງໃດອາດລຶບລ້າງໄດ້."[18] *{GC 295.3}*

ສັງຄົມທີ່ຈະເລີນສຸກຍ້ອນພຣະຄຳພີ

ເມື່ອຂ່າວໄດ້ແຜ່ລາມໄປທົ່ວທຸກປະເທດໃນເອີຣົບວ່າ ມີແຜ່ນດິນທີ່ມະນຸດທຸກຄົນ ສາມາດກິນໝາກຜົນ ຈາກເຫື່ອແຮງຂອງຕົນເອງ ແລະ ເຮັດຕາມຈິດສຳນຶກຜິດຊອບຂອງຕົນ ກໍມີຫຼາຍພັນຄົນຫຼັ່ງໄຫຼໄປສູ່ ທະວີບອາເມຣິກາເໜືອ ແລະ ມີການສ້າງຕັ້ງອານານິຄົມຫຼາຍແຫ່ງຂຶ້ນຢ່າງໄວວາ. "ຢູ່ແມ້ສຊາຊູເສັດ ມີການອອກກົດໝາຍພິເສດວ່າ ຈະໃຊ້ເງິນພາສີປະຊາຊົນເພື່ອເປັນທຶນຕ້ອນຮັບ ແລະ ຊ່ວຍເຫຼືອ ຄຣິສຕຽນທຸກຊົນຊາດທີ່ຈະຂ້າມມະຫາສະໝຸດແອດແລນຕິກມາ 'ເພື່ອໜີຈາກສົງຄາມ, ຄວາມອຶດຢາກ ຫຼື ການຖືກກົດຂີ່ຂົ່ມເຫັງ.' ດັ່ງນັ້ນ, ຈຶ່ງມີກົດລະບຽບຮັບຜູ້ຫຼົບໜີ ແລະ ຜູ້ທີ່ຖືກບີບບັງຄັບມາເປັນ ແຂກຂອງອານານິຄົມນັ້ນ."[19] ຊາວປີຫຼັງຈາກການລົງຈອດເຮືອເປັນຄັ້ງທຳອິດທີ່ພີມັດ (Plymouth) ມີ ກຸ່ມປົ່ນກຣິມສອງໝື່ນຄົນມາຕັ້ງຖິ່ນຖານຢູ່ເຂດນິວອິງແລນ. *{GC 296.1}*

"ຄົນເຫຼົ່ານີ້ພໍໃຈທີ່ຈະໃຊ້ຊີວິດແບບຫາເຊົ້າກິນຄ່ຳ ໂດຍຕ້ອງປະຢັດ ແລະ ເຮັດວຽກໜັກ" ເພື່ອຈະໄດ້ ຕາມຄວາມປະສົງທີ່ຕົນມຸ່ງໝາຍ. "ພວກເຂົາບໍ່ຫວັງສິ່ງໃດຈາກແຜ່ນດິນ ນອກຈາກໝາກຜົນທີ່ສົມຄວນ ແກ່ເຫື່ອແຮງຂອງຕົນ. ພວກເຂົາບໍ່ໄດ້ເພີ້ຝັນເຖິງເສັ້ນທາງທີ່ປູດ້ວຍກ້ອນກຸຫຼາບ . . . ແລະກໍມີຄວາມພໍໃຈ ກັບລະບົບການປົກຄອງທີ່ພັດທະນາຊ້າ ໆ ຢ່າງຕໍ່ເນື່ອງ. ເຂົາທັງຫຼາຍອົດທົນ ແລະ ທົນອົດຕໍ່ຄວາມ ຂາດແຄນໃນດິນແດນປ່າດົງ ແລະ ຫົດນ້ຳໃຫ້ຕົ້ນໄມ້ແຫ່ງເສລີພາບດ້ວຍນ້ຳຕາ ແລະ ຢາດເຫື່ອຂອງ ຕົນເອງ ຈົນຕົ້ນໄມ້ນັ້ນໄດ້ຢັ່ງຮາກເລິກລົງໄປໃນແຜ່ນດິນ." *{GC 296.2}*

ຄົນເຫຼົ່ານີ້ ຖືເອົາພຣະຄຳພີເປັນຮາກຖານແຫ່ງຄວາມເຊື່ອ, ເປັນແຫຼ່ງສະຕິປັນຍາ ແລະ ເປັນ ບົດບັນຍັດຂອງເສລີພາບ. ມີການເອົາໃຈໃສ່ສອນຫຼັກທຳຂອງພຣະຄຳພີໃນຄອບຄົວ, ຢູ່ໂຮງຮຽນ ແລະ ຢູ່ ໃນຄຣິສຕະຈັກ; ຜົນຂອງຫຼັກທຳເຫຼົ່ານັ້ນຈຶ່ງປາກົດອອກມາ ຄືການຮູ້ຈັກປະຢັດ, ສະຕິປັນຍາ, ຄວາມ ບໍຣິສຸດ ແລະ ການບັງຄັບຕົນ. ຄົນໜຶ່ງອາດອາໄສຢູ່ໃນອານານິຄົມຂອງຊາວຄະນະປູຣິຕັນເປັນເວລາ ຫຼາຍປີ ໂດຍ "ບໍ່ເຫັນຄົນຂີ້ເມົາ, ບໍ່ໄດ້ຍິນຄຳຫຍາບຄາຍ ຫຼື ພົບກັບຄົນຂໍທານ."[20] ພວກເຂົາ ພິສູດວ່າ ຫຼັກການຂອງພຣະຄຳພີ ເປັນສິ່ງປົກປ້ອງຄວາມຍິ່ງໃຫຍ່ຂອງຊາດທີ່ແນ່ນອນທີ່ສຸດ. ບັນດາ ອານານິຄົມທີ່ອ່ອນແອ ແລະ ຫ່າງໄກຈາກກັນນັ້ນ ໄດ້ເຕີບໂຕຂຶ້ນມາເປັນສະຫະພັນລັດທີ່ມີອຳນາດ ເຂັ້ມແຂງ, ຈົນຊາວໂລກສັງເກດ ແລະ ປະຫຼາດໃຈກັບຄວາມສະຫງົບສຸກ ແລະ ຄວາມຈະເລີນຮຸ່ງເຮືອງ ຂອງ "ຄຣິສຕະຈັກທີ່ບໍ່ມີສັນຕະປາປາ ແລະ ລັດທີ່ບໍ່ມີກະສັດ." *{GC 296.3}*

ຈາກການປະຕິຮູບສູ່ການຖົດຖອຍ

ຢ່າງໃດກໍຕາມ, ມີຄົນຈຳນວນຫຼວງຫຼາຍຂີ່ເຮືອຂ້າມມາທີ່ອາເມຣິກາ ໂດຍມີແຮງຈູງໃຈທີ່ແຕກຕ່າງ ຢ່າງໃຫຍ່ຫຼວງຈາກພວກປົ່ນກຣິມກຸ່ມທຳອິດ. ເຖິງແມ່ນວ່າຄວາມເຊື່ອ ແລະ ຄວາມບໍຣິສຸດດັ້ງເດີມຍັງ ສົ່ງຜົນຕໍ່ສັງຄົມຢ່າງກວ້າງຂວາງ, ແຕ່ເມື່ອຄົນທີ່ສະແຫວງຫາຜົນປະໂຫຍດຝ່າຍໂລກເພີ່ມຈຳນວນ ຂຶ້ນ ອິດທິພົນດີເຫຼົ່ານັ້ນກໍໜ້ອຍລົງເລື້ອຍ ໆ. *{GC 296.4}*

---

[18] ເອກະສານລັດຖະສະພາສະຫະລັດອາເມຣິກາ (Congressional documents, U.S.A.), ໝວດທີ 200, ສະບັບເລກ ທີ 271.

[19] ມາຕິນ (Martyn), ເຫຼັ້ມ 5, ໜ້າ 417.

[20] ບານຄຣອບ, ພາກ 1, ບົດ 19, ວັກ 25.

ຊາວອານາບັບຕ່າງ ໆ ໄດ້ຕັ້ງກົດລະບຽບຂຶ້ນໃນເບື້ອງຕົ້ນວ່າ ມີແຕ່ສະມາຊິກຄຣິສຕະຈັກເທົ່ານັ້ນ ທີ່ມີສິດລົງຄະແນນສຽງ ຫຼື ດຳລົງຕຳແໜ່ງຝ່າຍປົກຄອງໄດ້, ແຕ່ກົດລະບຽບນີ້ໄດ້ນຳໄປສູ່ຜົນອັນຮ້າຍແຮງທີ່ສຸດ. ມີການຮັບເອົາມາດຕະການດັ່ງກ່າວ ເພື່ອປົກປັກຮັກສາຄວາມບໍຣິສຸດຂອງລັດ, ແຕ່ຜົນທີ່ຕາມມາຄືຄວາມເສື່ອມເສຍຂອງຄຣິສຕະຈັກ. ເມື່ອການອ້າງສາສະໜາເປັນເງື່ອນໄຂຂອງການມີສິດເລືອກຕັ້ງ ແລະ ການດຳລົງຕຳແໜ່ງ, ຈຶ່ງມີຫຼາຍຄົນເຂົ້າເປັນສະມາຊິກຄຣິສຕະຈັກ ຍ້ອນຢາກໄດ້ຜົນປະໂຫຍດຝ່າຍໂລກ ແຕ່ບໍ່ມີການປ່ຽນແປງໃນໃຈເລີຍ. ໃນທີ່ສຸດຄຣິສຕະຈັກຈຶ່ງປະກອບດ້ວຍສະມາຊິກເຊິ່ງສ່ວນຫຼາຍບໍ່ໄດ້ກັບໃຈ ແລະ ແມ່ນແຕ່ໃນກຸ່ມສາສະໜາຈານ ກໍມີຫຼາຍຄົນທີ່ຍຶດຖືຄຳສອນຜິດ ໂດຍພວກເຂົາບໍ່ຮູ້ຈັກຣິດອຳນາດຂອງພຣະວິນຍານບໍຣິສຸດທີ່ສາມາດຟື້ນຟູຈິດວິນຍານ. ສະນັ້ນ, ຈຶ່ງເປັນຫຼັກຖານອີກຢ່າງໜຶ່ງ ທີ່ພິສູດເຖິງຜົນອັນຊົ່ວຮ້າຍຂອງການອາໄສຄວາມຊ່ວຍເຫຼືອຈາກອຳນາດລັດ ເພື່ອພັດທະນາຄຣິສຕະຈັກ ແລະ ສະໜັບສະໜູນການປະກາດຂ່າວປະເສີດ; ຜົນອັນຮ້າຍແຮງນີ້ ໄດ້ປາກົດຂຶ້ນຕະຫຼອດປະຫວັດສາດຂອງຄຣິສຕະຈັກ ຕັ້ງແຕ່ສະໄໝຈັກກະພັດຄອນສະຕັນຕິນຈົນເຖິງປັດຈຸບັນ, ແຕ່ຂ່າວປະເສີດເປັນເລື່ອງຂອງພຣະເຢຊູ ຜູ້ຊົງກ່າວວ່າ: “ອານາຈັກຂອງເຮົາບໍ່ເປັນຂອງໂລກນີ້.” (ໂຢຮັນ 18:36). ການຮ່ວມມືລະຫວ່າງຄຣິສຕະຈັກກັບອຳນາດລັດ, ເຖິງແມ່ນຈະເລັກໜ້ອຍທີ່ສຸດ ແລະ ເບິ່ງຄືເປັນຫົນທາງທີ່ຈະນຳໃຫ້ຊາວໂລກຂະຫຍັບເຂົ້າມາຫາຄຣິສຕະຈັກ, ແຕ່ໃນຄວາມເປັນຈິງ ມັນນຳຄຣິສຕະຈັກໃຫ້ຂະຫຍັບໄປຫາຊາວໂລກຕ່າງຫາກ. {GC 297.1}

ຫຼັກທຳອັນຍິ່ງໃຫຍ່ທີ່ ອາຈານ ໂຣບິນສັນ ແລະ ໂຣເຈີ ວິນລຽມ ສອນຢ່າງໜ້າຍົກຍ້ອງນັ້ນຄື: 1) ຄວາມເຂົ້າໃຈໃນສັດຈະທຳເປັນສິ່ງທີ່ຕ້ອງພັດທະນາຂຶ້ນຕາມລຳດັບ ແລະ 2) ຄຣິສຕຽນຄວນມີຄວາມພ້ອມ ທີ່ຈະຮັບເອົາແສງສະຫວ່າງທັງໝົດທີ່ຈະສ່ອງອອກມາຈາກພຣະຄຳອັນສັກສິດຂອງພຣະເຈົ້າ; ແຕ່ລູກຫຼານພາກັນລືມຫຼັກທຳນີ້. ເຖິງແມ່ນວ່າ ບັນດາຄຣິສຕະຈັກໂປຣແຕັສຕັງໃນອາເມຣິກາ ແລະ ໃນເອີຣົບ ໄດ້ຮັບພຣະພອນຈາກການປະຕິຮູບຄັ້ງໃຫຍ່ໃນສະຕະວັດທີ 16, ແຕ່ພວກເຂົາບໍ່ໄດ້ສານຕໍ່ໃນການປະຕິຮູບ. ເຖິງແມ່ນວ່າມີຜູ້ຊາຍທີ່ສັດຊື່ບາງຄົນຂຶ້ນມາເປັນບາງຄັ້ງບາງຄາວ ເພື່ອປະກາດຄວາມຈິງໃໝ່ ແລະ ເປີດໂປງຄວາມເທັດທີ່ໄດ້ຮັບຄວາມນິຍົມມາເປັນເວລາດົນນານ, ແຕ່ຄົນສ່ວນໃຫຍ່ເໝືອນກັບຊາວຢິວໃນສະໄໝຂອງພຣະຄຣິສ ຫຼື ພວກຝ່າຍສັນຕະປາປາໃນສະໄໝຂອງລູເທີ; ພວກເຂົາພໍໃຈທີ່ຈະເຊື່ອຖືເໝືອນບັນພະບຸລຸດເຄີຍເຊື່ອຖືມາ ແລະ ດຳເນີນຊີວິດເໝືອນກັບປູ່ຍ່າຕາຍາຍ. ດ້ວຍເຫດນີ້, ການນັບຖືສາສະໜາຈຶ່ງເສື່ອມລົງເຖິງສະພາບທີ່ເນັ້ນແຕ່ຮູບແບບພາຍນອກ ແລະ ພິທີກຳ; ຄວາມເທັດ ແລະ ຄວາມງົມງວາຍທີ່ຄຣິສຕະຈັກຄົງປະຖິ້ມຖ້າຫາກວ່າຍັງດຳເນີນຕາມແສງແຫ່ງພຣະຄຳ ຈຶ່ງຖືກຖະໜອມຮັກສາເອົາໄວ້. ດັ່ງນີ້ແຫຼະ, ອຸດົມການທີ່ກະຕຸ້ນຂະບວນການປະຕິຮູບນັ້ນຈຶ່ງຄ່ອຍ ໆ ມອດລົງ ຈົນຄຣິສຕະຈັກທັງຫຼາຍຝ່າຍໂປຣແຕັສຕັງ ຕ້ອງການໃຫ້ມີການປະຕິຮູບ ບໍ່ຕ່າງຫຍັງຫຼາຍກັບຄຣິສຕະຈັກໂຣມໃນສະໄໝຂອງລູເທີ. ມີການນິຍົມຝ່າຍໂລກແບບດຽວກັນ ແລະ ຄວາມເປັນອຳມະພາດຝ່າຍຈິດວິນຍານເໝືອນກັນ, ມີການເຄົາລົບນັບຖືຄວາມຄິດເຫັນຂອງມະນຸດຄ້າຍຄືກັນ ແລະ ການເອົາທິດສະດີຂອງມະນຸດມາຕັ້ງແທນພຣະຄຳຂອງພຣະເຈົ້າເໝືອນຄຣິສຕະຈັກໂຣມ. {GC 297.2}

ການແຜ່ກະຈາຍພຣະຄຳພີຢ່າງກວ້າງຂວາງໃນຕອນຕົ້ນຂອງສະຕະວັດທີ 19 ແລະ ຄວາມສະຫວ່າງອັນໃຫຍ່ຫຼວງທີ່ສ່ອງມາຈາກພຣະຄຳພີມາສູ່ຊາວໂລກນັ້ນ ບໍ່ໄດ້ສົ່ງຜົນໃຫ້ຄົນພັດທະນາຄວາມເຂົ້າໃຈໃນສັດຈະທຳ ຫຼື ໃຫ້ຄົນມີປະສົບການໃນຊີວິດເຖິງຜົນຂອງການນັບຖືສາສະໜາ. ຊາຕານບໍ່ສາມາດເຮັດຄືໃນສະໄໝກ່ອນ ທີ່ເຊື່ອງພຣະຄຳຂອງພຣະເຈົ້າໄວ້ຈາກປະຊາຊົນ, ເພາະມີການນຳພຣະຄຳພີແຈກຈ່າຍໜ່າຍ ຈົນທຸກຄົນສາມາດເຂົ້າເຖິງພຣະຄຳພີໄດ້; ສະນັ້ນ, ເພື່ອບັນລຸວັດຖຸປະສົງ ມັນ

ຈຶ່ງນຳຄົນໃຫ້ຕີຄ່າພຣະຄຳພີໄວ້ຕ່ຳ; ມະນຸດຈຶ່ງລະເລີຍທີ່ຈະຄົ້ນຫາພຣະຄຳພີ. ດ້ວຍເຫດນີ້, ພວກເຂົາຈຶ່ງສືບຕໍ່ຍອມຮັບເອົາຄຳອະທິບາຍທີ່ຜິດພ້ຽນ ແລະ ຍັງຍຶດເອົາຄຳສອນທີ່ບໍ່ມີການສະໜັບສະໜູນຈາກພຣະຄຳພີ. *{GC 298.1}*

ເມື່ອເຫັນວ່າ ຄວາມພະຍາຍາມທຳລາຍຄວາມຈິງດ້ວຍການຂົ່ມເຫັງບໍ່ໄດ້ຜົນ, ຊາຕານຈຶ່ງຫັນມາໃຊ້ວິທີປະນີປະນອມອີກ ເພາະເປັນວິທີທີ່ເຄີຍໃຊ້ໃນການນຳໃຫ້ຄົນຫຼົງຈາກຄວາມຈິງຄັ້ງໃຫຍ່ ເຊິ່ງນຳໄປສູ່ການສ້າງຕັ້ງຄຣິສຕະຈັກໂຣມ. ຄັ້ງນີ້ມັນບໍ່ໄດ້ຫຼອກໃຫ້ຄຣິສຕຽນມາຜູກມິດກັບຄົນທີ່ຂາບໄຫວ້ຮູບເຄົາລົບ ແຕ່ໃຫ້ຈັບມືກັບຄົນທີ່ອຸທິດຕົນໃຫ້ກັບສິ່ງຂອງຝ່າຍໂລກ; ເພາະຄົນເຫຼົ່ານັ້ນໄດ້ພິສູດຕົນວ່າ ເປັນພວກທີ່ຂາບໄຫວ້ວັດຖຸສິ່ງຂອງເໝືອນພວກທີ່ຂາບໄຫວ້ຮູບປັ້ນນັ້ນເອງ. ຜົນຂອງການຮ່ວມມືນີ້ຮ້າຍແຮງບໍ່ນ້ອຍໜ້າໄປກວ່າສະໄໝບູຮານ; ພວກເຂົາສົ່ງເສີມຄວາມຫຍິ່ງທະນົງຕົວ ແລະ ຄວາມຫຼູຫຼາຟຸ່ມເຟືອຍໂດຍເອົາສາສະໜາມາບັງໜ້າ; ຄຣິສຕະຈັກທັງຫຼາຍຈຶ່ງເສື່ອມລົງ. ຊາຕານຍັງສືບຕໍ່ບິດເບືອນຄຳສອນຂອງພຣະຄຳພີ, ສ່ວນທຳນຽມປະຕິບັດເຊິ່ງເປັນເຫດໃຫ້ຄົນນັບລ້ານຕ້ອງພິນາດນັ້ນໄດ້ຢັ່ງຮາກລົງເລິກ. ຄຣິສຕະຈັກທັງສະໜັບສະໜູນ ທັງປົກປ້ອງທຳນຽມເຫຼົ່ານີ້ແທນທີ່ຈະຕໍ່ສູ້ເພື່ອ “ຄວາມເຊື່ອເຊິ່ງຄັ້ງໜຶ່ງພຣະເຈົ້າຊົງມອບໄວ້ແກ່ຊາວບໍຣິສຸດ.” (ຢູດາ 1:3 ດັດແປງຈາກສະບັບ TKJV). ຫຼັກທຳທີ່ພວກນັກປະຕິຮູບໄດ້ທຸ້ມເທກຳລັງ ແລະ ຍອມທົນທຸກທໍລະມານເພື່ອສະໜັບສະໜູນນັ້ນ ຈຶ່ງເສື່ອມລົງແບບນີ້ແຫຼະ. *{GC 298.2}*



ດາວຕົກຄັ້ງໃຫຍ່ໃນວັນທີ 13 ພະຈິກ 1833.

ເບິ່ງໜ້າ 265.

From Bible Readings for the Home Circle *(1889).*

17

ຜູ້ປະກາດແຫ່ງຮຸ່ງອາລຸນ

ຊົງສັນຍາວ່າຈະສະເດັດກັບມາ

ໜຶ່ງໃນຄວາມຈິງທີ່ໜັກແໜ້ນ ແລະ ປະເສີດທີ່ສຸດໃນພຣະຄຳພີ ຄືຄຳສອນກ່ຽວກັບການສະເດັດມາ ຄັ້ງທີສອງຂອງພຣະຄຣິສ ເພື່ອໃຫ້ວຽກງານແຫ່ງການຊົງໄຖ່ມະນຸດໃຫ້ລອດນັ້ນສຳເລັດຢ່າງສົມບູນ. ສຳລັບ ຄົນຂອງພຣະເຈົ້າທີ່ອາໄສໃນໂລກດັ່ງຄົນແປກໜ້າ ແລະ ຕ້ອງດຳເນີນຊີວິດພາຍໃຕ້ "ເງົາແຫ່ງຄວາມ ຕາຍ," ມີພຣະສັນຍາທີ່ໃຫ້ຄວາມຫວັງ ແລະ ເຮັດໃຫ້ໃຈເບີກບານ ຄືເລື່ອງການສະເດັດມາຂອງ ພຣະອົງຜູ້ຊົງເປັນ "ເຫດໃຫ້ຄົນທັງປວງເປັນຄືນມາ ທັງເປັນຊີວິດ" ເພື່ອ "ນຳຜູ້ຖືກເນລະເທດກັບສູ່ ຣາຊສຳນັກ." (ມັດທາຍ 4:16; ໂຢຮັນ 11:25; 2 ຊາມູເອນ 14:13 TKJV). ເລື່ອງການສະເດັດມາ ຄັ້ງທີສອງຂອງພຣະຄຣິສ ແມ່ນຄຳສອນທີ່ສຳຄັນເປັນພິເສດຂອງພຣະຄຳພີ. ນັບຕັ້ງແຕ່ມື້ທີ່ບັນພະບຸລຸດ ຄູ່ທຳອິດຕ້ອງຍ່າງກ້າວອອກຈາກສວນເອເດນຢ່າງເສົ້າສະຫຼົດໃຈ, ລູກຫຼານທັງຫຼາຍທີ່ມີຄວາມເຊື່ອໄດ້ ລໍຖ້າໃຫ້ຜູ້ທີ່ພຣະເຈົ້າຊົງສັນຍາໄວ້ນັ້ນສະເດັດມາ ເພື່ອທຳລາຍອຳນາດຂອງມານຮ້າຍ ແລະ ນຳ ພວກເຂົາກັບຄືນໄປສູ່ອຸທະຍານອັນສຸກສະເສີມທີ່ມະນຸດໄດ້ສູນເສຍໄປ. ຜູ້ບໍຣິສຸດໃນສະໄໝບູຮານໄດ້ ເຝົ້າຄອຍການສະເດັດມາດ້ວຍສະຫງ່າຣາສີຂອງພຣະເມຊີອາ ອັນເປັນປາຍທາງແຫ່ງຄວາມຫວັງຂອງ ພວກເຂົາ. ທ່ານ ເອນົກ ເປັນຄົນລຸ້ນທີ 7 ຕັ້ງແຕ່ອາດາມອອກມາຈາກສວນເອເດນ ແລະ ເປັນຜູ້ ດຳເນີນຊີວິດກັບພຣະເຈົ້າໃນໂລກເປັນເວລາ 300 ປີ; ພຣະເຈົ້າຊົງໃຫ້ເພິ່ນເຫັນການສະເດັດມາຂອງ ພຣະຜູ້ຊ່ວຍໃຫ້ລອດລ່ວງໜ້າຕັ້ງແຕ່ສະໄໝບູຮານ, ເພິ່ນຈຶ່ງປະກາດວ່າ, "ອົງພຣະຜູ້ເປັນເຈົ້າຈະສະເດັດ ມາ ພ້ອມຝູງເທວະດາຕົນບໍຣິສຸດຂອງພຣະອົງນັບເປັນໝື່ນໆ ເພື່ອຈະນຳເອົາການຕັດສິນມາສູ່ທຸກ ຄົນ." (ຢູດາ 14, 15). ໃນຍາມທີ່ ທ່ານ ໂຢບ ກຳລັງທົນທຸກທໍລະມານຢູ່ນັ້ນ ເພິ່ນໄດ້ກ່າວດ້ວຍຄວາມ ໄວ້ວາງໃຈທີ່ບໍ່ຫວັ່ນໄຫວວ່າ: "ຂ້າພະເຈົ້າຮູ້ວ່າ ພຣະຜູ້ໄຖ່ຂອງຂ້າພະເຈົ້າຊົງມີຊີວິດຢູ່, ແລະ ໃນທີ່ສຸດ ພຣະອົງຈະຊົງຢືນຢູ່ເທິງແຜ່ນດິນໂລກ . . . ໃນເນື້ອໜັງຂອງຂ້າພະເຈົ້າ ຂ້າພະເຈົ້າຈະເຫັນພຣະເຈົ້າ ຜູ້ ເຊິ່ງຂ້າພະເຈົ້າຈະໄດ້ເຫັນເອງ ແລະ ໜ່ວຍຕາຂອງຂ້າພະເຈົ້າຈະໄດ້ເຫັນ ບໍ່ແມ່ນຄົນອື່ນ." (ໂຢບ 19:25–27 ດັດແປງຈາກສະບັບ TKJV). *{GC 299.1}*

ການສະເດັດມາຂອງພຣະຄຣິສ ເພື່ອເລີ່ມຕົ້ນການປົກຄອງແຫ່ງຄວາມຊອບທຳນັ້ນ ເປັນແຮງ ບັນດານໃຈໃຫ້ແກ່ບັນດາຜູ້ຂຽນໃນພຣະຄຳພີ ໃຫ້ບັນລະຍາຍດ້ວຍຖ້ອຍຄຳທີ່ປະເສີດຢ່າງຍິ່ງ. ພວກ ນັກກະວີ ແລະ ຜູ້ເຜີຍພຣະທຳໃນພຣະຄຳພີ ໄດ້ກ່າວເຖິງການສະເດັດມາດ້ວຍຖ້ອຍຄຳທີ່ໃຫ້ເຫັນພາບ ເຖິງການສະເດັດກັບມາດ້ວຍຣັດສະໝີພາບອັນຮຸ່ງເຮືອງຂອງສະຫວັນ. ສ່ວນຜູ້ປະພັນເພງສັນລະເສີນໄດ້ ຂັບເພງຮ້ອງເຖິງຣິດອຳນາດ ແລະ ສະຫງ່າຣາສີຂອງກະສັດແຫ່ງອິດສະຣາເອນວ່າ: "ພຣະເຈົ້າສົ່ງແສງ ແຈ້ງມາຈາກພູເຂົາຊີໂອນ ຄືພຣະນະຄອນທີ່ມີຄວາມງົດງາມອັນຄົບຖ້ວນ ແລະ ສົມບູນແບບ. ພຣະເຈົ້າ ຂອງພວກເຮົາກຳລັງມາຢ່າງໂດ່ງດັງ, . . . ພຣະອົງຊົງຮຽກເອີ້ນຟ້າສະຫວັນເບື້ອງເທິງ ແລະ ແຜ່ນດິນໂລກ

ມາ ໃຫ້ເປັນພະຍານເພື່ອຕັດສິນປະຊາຊົນຂອງພຣະອົງ.” (ເພງສັນລະເສີນ 50:2–4). “ຈົ່ງຍິນດີ ເຖີດ ແຜ່ນດິນໂລກ ແລະ ທ້ອງຟ້າເອີຍ . . . ເມື່ອອົງພຣະຜູ້ເປັນເຈົ້າມາປົກຄອງຄົນໂລກນີ້, ພຣະອົງ ຈະປົກຄອງຢ່າງສັດຊື່ ແລະ ເປັນທຳ ແລະ ຈະຕັດສິນປະຊາຊົນທັງຫຼາຍດ້ວຍຄວາມຈິງຂອງ ພຣະອົງ.” (ເພງສັນລະເສີນ 96:11–13 LO2012). *{GC 300.1}*

ຜູ້ເຜີຍພຣະທຳເອຊາຢາກ່າວວ່າ: “ຄົນທັງຫຼາຍທີ່ຢູ່ໃນຂີ້ຝຸ່ນຈົ່ງຕື່ນຂຶ້ນ ຈົ່ງຊົມຊື່ນຟ້ອນລຳຊະນະ ເຫດ ວ່ານ້ຳໝອກຂອງພຣະອົງເປັນນ້ຳໝອກຂອງຮຸ່ງແຈ້ງ ແລະ ດິນຈະຖິ້ມຄົນຕາຍທັງຫຼາຍອອກໄປ ພາຍນອກ.” “ຄົນຕາຍທັງຫຼາຍຂອງພຣະອົງຈະມີຊີວິດຢູ່, ສົບທັງຫຼາຍຂອງເຮົາຈະລຸກຂຶ້ນອີກ.” “ພຣະອົງ ຈະກືນຄວາມຕາຍຕະຫຼອດໄປ. ພຣະເຈົ້າຢາເວອົງເຈົ້ານາຍຈະເຊັດນ້ຳຕາ ຈາກທຸກໃບໜ້າ; ພຣະອົງ ຈະກຳຈັດຄວາມອັບອາຍຂອງປະຊາຊົນຂອງພຣະອົງ ອອກໄປຈາກແຜ່ນດິນໂລກ. ພຣະເຈົ້າຢາເວກ່າວ ດັ່ງນັ້ນ. ໃນວັນນັ້ນພວກເຂົາຈະເວົ້າວ່າ, ‘ແນ່ນອນ ນີ້ຄືພຣະເຈົ້າຂອງພວກເຮົາ; ພວກເຮົາໄວ້ວາງໃຈໃນ ພຣະອົງ, ແລະ ພຣະອົງໄດ້ຊ່ວຍພວກເຮົາ. ນີ້ຄືພຣະເຈົ້າຢາເວ, ພວກເຮົາໄວ້ວາງໃຈໃນພຣະອົງ;[1] ໃຫ້ ພວກເຮົາມາຊື່ນຊົມ ແລະ ຍິນດີໃນຄວາມພົ້ນຂອງພຣະອົງ.’” (ເອຊາຢາ 26:19 ດັດແປງຈາກສະບັບ ລາວບູຮານ; 25:8, 9 LCV). *{GC 300.2}*

ສ່ວນ ຜູ້ເຜີຍພຣະທຳ ຣາບາກຸກ ໄດ້ ເຫັນ ການ ສະເດັດ ມາ ຂອງ ພຣະຄຣິສ ໃນ ນິມິດ ຈຶ່ງ ກ່າວ ວ່າ: “ພຣະເຈົ້າໄດ້ມາຈາກເຕມານ, ອົງບໍຣິສຸດມາຈາກພູເຂົາປາຣານ. ສະຫງ່າຣາສີຂອງພຣະອົງ ກຳປົກຄຸມຟ້າສະຫວັນ ແລະ ໂລກນີ້ກໍເຕັມ ດ້ວຍ ຄຳ ສັນລະເສີນ ພຣະອົງ. ຄວາມ ສະຫງ່າງາມ ຂອງພຣະອົງຄືກັບຕາເວັນທີ່ກຳລັງຂຶ້ນ; ມີແສງກະພິບອອກມາຈາກມື, ບ່ອນທີ່ຣິດອຳນາດຂອງ ພຣະອົງໄດ້ ຖືກ ເຊື່ອງ ໄວ້.” “ພຣະອົງ ໄດ້ ຢູ່ ທີ່ນັ້ນ ແລະ ໄດ້ ແທກ ແຜ່ນດິນໂລກ, ພຣະອົງ ໄດ້ ເບິ່ງ ແລະ ພວກ ຕ່າງ ປະເທດ ໄດ້ ແຕກ ແຍກ ຈາກ ກັນ ແລະ ພູ ທັງ ຫຼາຍ ແຕ່ ບູຮານ ໄດ້ ແຕກ ເປັນ ໝຸ່ນ, ພູ ນ້ອຍ ອັນ ຕະ ຫຼອດ ໄປ ເປັນ ນິດ ທັງ ຫຼາຍ ໄດ້ ເຈື່ອນ, ທາງ ທັງ ຫຼາຍ ຂອງ ພຣະ ອົງ ກໍ ຕັ້ງ ຢູ່ ສືບ ໆ ໄປ ເປັນ ນິດ.” “ພຣະອົງໄດ້ຂຶ້ນເທິງຫຼັງມ້າທັງຫຼາຍຂອງພຣະອົງ, ເທິງລົດທັງຫຼາຍແຫ່ງຄວາມພົ້ນຂອງ ພຣະອົງ.” “ເມື່ອໜ່ວຍພູໄດ້ເຫັນພຣະອົງກໍສະທ້ານຫວັ່ນໄຫວ. . . . ນ້ຳທີ່ຢູ່ໃຕ້ພື້ນພິພົບໄດ້ຊັດຂຶ້ນຢ່າງ ສະໜັ່ນຫວັ່ນໄຫວ. ຕໍ່ແສງແມບມາບຂອງລູກທະນູທີ່ຟົ້ງໄປຢ່າງໄວ ຕໍ່ແສງເຫຼື້ອມໃສຂອງຫອກທີ່ຟົ້ງຜ່ານ ໄປນັ້ນ ດວງຕາເວັນກໍຍັງໄດ້ຢູ່ກັບບ່ອນຂອງມັນ ແລະ ດວງເດືອນກໍຍັງບໍ່ໄດ້ເຄື່ອນຍ້າຍ.” “ພຣະອົງສະເດັດ ອອກໄປເພື່ອຊ່ວຍປະຊາຊົນຂອງພຣະອົງໃຫ້ລອດ ເພື່ອຊ່ວຍຜູ້ທີ່ພຣະອົງຊົງເຈີມໄວ້ໃຫ້ລອດ.” (ຣາບາກຸກ 3:3–4 LCV, 6 ສະບັບລາວບູຮານ, 8 ສະບັບລາວບູຮານ, 10, 11, 13 TKJV). *{GC 300.3}*

ເມື່ອພຣະຜູ້ຊ່ວຍໃຫ້ລອດກຳລັງຈະຖືກແຍກອອກຈາກພວກສາວົກ, ພຣະອົງຊົງປອບໃຈພວກເຂົາ ດ້ວຍຄຳໝັ້ນສັນຍາວ່າ ພຣະອົງຈະສະເດັດກັບມາອີກ, ໂດຍຊົງກ່າວວ່າ: “ຢ່າໃຫ້ໃຈຂອງເຈົ້າທັງຫຼາຍ ວຸ້ນວາຍໄປ . . . ໃນຜາສາດພຣະບິດາເຈົ້າຂອງເຮົາມີທີ່ຢູ່ຫຼາຍບ່ອນ, . . . ເຮົາໄປຈັດແຈງບ່ອນໄວ້ສຳລັບເຈົ້າ ທັງຫຼາຍ. ເມື່ອເຮົາໄປຈັດຕຽມບ່ອນໄວ້ສຳລັບພວກເຈົ້າແລ້ວ ເຮົາຈະກັບຄືນມາຮັບເອົາພວກເຈົ້າໄປຢູ່ກັບ ເຮົາ.” (ໂຢຮັນ 14:1–3). “ເມື່ອບຸດມະນຸດສະເດັດມາໃນສະຫງ່າຣາສີ ພ້ອມດ້ວຍຝູງເທວະດາຂອງ ພຣະອົງນັ້ນ ເພິ່ນຈະນັ່ງເທິງບັນລັງອັນຮຸ່ງເຮືອງຂອງພຣະອົງ ບັນດາປະຊາຊົນທຸກຊົນຊາດຈະຖືກນຳ ມາໂຮມກັນຢູ່ຕໍ່ໜ້າພຣະອົງ.” (ມັດທາຍ 25:31, 32). *{GC 301.1}*

ຫຼັງຈາກພຣະຄຣິສສະເດັດຂຶ້ນສະຫວັນ, ທູດສະຫວັນທີ່ຍັງລໍຖ້າຢູ່ເທິງພູເຂົາໝາກກອກເທດ ໄດ້ ຢ້ຳເຕືອນພວກສາວົກເຖິງພຣະສັນຍາ ເລື່ອງການສະເດັດກັບມາຂອງພຣະອົງວ່າ: “ພຣະເຢຊູເຈົ້າ*ອົງ ນີ້ທີ່ຖືກ*ຮັບໄປຈາກພວກເຈົ້າຂຶ້ນສູ່ສະຫວັນແລ້ວ ພຣະອົງຈະມາປາກົດ*ຢ່າງທີ່ພວກເຈົ້າໄດ້ເຫັນ*ພຣະອົງ

[1] ພຣະຄຳພີບາງສະບັບຂຽນວ່າ “ພວກເຮົາໄດ້ລໍຄອຍພຣະອົງ.”

ຂຶ້ນສູ່ສະຫວັນນັ້ນແຫຼະ.” (ກິດຈະການ 1:11). ຝ່າຍອັກຄະສາວົກໂປໂລໄດ້ກ່າວໂດຍການດົນໃຈຂອງ ພຣະວິນຍານບໍຣິສຸດວ່າ: “ດ້ວຍວ່າ ຈະມີສຽງຮ້ອງບັນຊາອັນດັງ, ສຽງຂອງອັກຄະເທວະດາ, ສຽງແກຂອງ ພຣະເຈົ້າ ແລະ *ອົງພຣະຜູ້ເປັນເຈົ້າເອງ* ຈະສະເດັດລົງມາຈາກສະຫວັນ.” (1 ເທສະໂລນີກ 4:16). ແລ້ວ ຜູ້ເຜີຍພຣະທຳໂຢຮັນໄດ້ຂຽນຈາກເກາະປັດໂມວ່າ: “ເບິ່ງແມ! ພຣະອົງຈະສະເດັດມາ ມີເມກເປັນຂະບວນ ແຫ່ ແລະ ຕາທຸກໜ່ວຍຈະເຫັນພຣະອົງ.” (ພຣະນິມິດ 1:7). *{GC 301.2}*

ຄວາມຫວັງອັນໜ້າຍິນດີ

ການສະເດັດກັບມາຂອງພຣະອົງນັ້ນ ຈະນຳເອົາສະຫງ່າຣາສີທັງປວງ ຕາມທີ່ຂຽນໄວ້ວ່າ: “ທຸກ ສິ່ງຈະຖືກຟື້ນຟູສູ່ສະພາບເດີມ ເຊິ່ງພຣະອົງຊົງກ່າວໄວ້ ໂດຍຜ່ານປາກຂອງບັນດາຜູ້ເຜີຍພຣະທຳຜູ້ ບໍຣິສຸດຂອງພຣະອົງ ຕັ້ງແຕ່ເລີ່ມສ້າງໂລກ.” (ກິດຈະການ 3:21 ແປຈາກສະບັບ KJV). ເມື່ອນັ້ນ ການປົກຄອງອັນຍາວນານແຫ່ງຄວາມຊົ່ວຈະຖືກທຳລາຍລົງ; “ຣາຊອານາຈັກໂລກນີ້ເປັນກຳມະສິດ ຂອງອົງພຣະຜູ້ເປັນເຈົ້າຂອງພວກເຮົາ ແລະ ຂອງພຣະຄຣິສຂອງພຣະອົງ ແລະ ພຣະອົງຈະປົກຄອງ ຕະຫຼອດຊົ່ວນິຣັນ.” (ພຣະນິມິດ 11:15). “ແລ້ວພຣະເຈົ້າກໍຈະໃຫ້ເຫັນພຣະສະຫງ່າຣາສີ ເປັນພຣະ ຣັດສະໝີມາປາກົດຢ່າງສ່ອງໃສແຈ້ງ ທຸກປະຊາຊາດກໍຈະໄດ້ເຫັນພຣະສະຫງ່າຣາສີ.” “ເຫດວ່າ, ດິນ ງອກຍອດ ແລະ ສວນງອກແນວປູກທັງຫຼາຍຂຶ້ນຢ່າງໃດ ພຣະອົງເຈົ້າພຣະເຢໂຮວາຈະໃຫ້ຄວາມ ຊອບທຳກັບຄວາມສັນລະເສີນງອກຂຶ້ນຢ່າງນັ້ນຕໍ່ໜ້າຊາວປະເທດທັງປວງ.” “ອົງພຣະຜູ້ເປັນເຈົ້າອົງຊົງ ຣິດອຳນາດຍິ່ງໃຫຍ່ ຈະເປັນດັ່ງມົງກຸດດອກໄມ້ອັນສະຫງ່າງາມ ສຳລັບປະຊາຊົນຂອງພຣະອົງຜູ້ຍັງມີ ຊີວິດຢູ່.” (ເອຊາຢາ 40:5; 61:11 ສະບັບລາວບູຮານ; 28:5). *{GC 301.3}*

ໃນເວລານັ້ນ, ອານາຈັກຂອງພຣະເມຊີອາທີ່ມະນຸດປາຖະໜາມາດົນນານ ຈະຖືກສະຖາປະນາ ຂຶ້ນ ແລະ ຈະເປັນອານາຈັກແຫ່ງສັນຕິສຸກສັນຕິພາບທົ່ວແຜ່ນດິນໂລກທັງສິ້ນ. “ພຣະເຈົ້າຢາເວຈະໃຫ້ ຄວາມເມດຕາຕໍ່ນະຄອນເຢຣູຊາເລັມ, ຕໍ່ຄົນທັງໝົດທີ່ຢູ່ໃນບ່ອນຮົກຮ້າງເພພັງນັ້ນ. ເຖິງວ່າດິນແດນນັ້ນ ຈະເປັນຖິ່ນແຫ້ງແລ້ງກັນດານ ເຮົາກໍຈະໃຫ້ກາຍເປັນສວນເອເດນໄດ້ ຈາກພື້ນດິນແຫ້ງຂາດນ້ຳຫຼໍ່ລ້ຽງໃຫ້ ເກີດຜົນ ກໍຈະເປັນດັ່ງສວນຂອງພຣະເຈົ້າຢາເວ.” “ຈະເປັນທີ່ສວຍງາມວິໄລດັ່ງພູເລບານອນພຸ້ນ. ແລະ ເປັນດັ່ງທົ່ງຫຍ້າທີ່ອຸດົມສົມບູນດີຂອງພູກາເມນ ແລະ ທົ່ງຊາໂຣນດ້ວຍ.” “ຄົນຈະບໍ່ເອີ້ນເຈົ້າອີກຕໍ່ໄປ ວ່າ, ‘ຜູ້ຖືກປະຖິ້ມ.’ ຄົນຈະບໍ່ເອີ້ນຢ່າງນີ້ອີກວ່າ, ‘ເມຍທີ່ຜົວໜີປະ.’ ສຳລັບດິນແດນຂອງເຈົ້າ ຄົນ ຈະເວົ້າກັນວ່າ, ‘ພຣະເຈົ້າພໍໃຈນຳບາງ’ ຄືຊື່ໃໝ່ຂອງເຈົ້າ. ຄົນຈະເອີ້ນວ່າ, ‘ຜູ້ແຕ່ງງານທີ່ມີຄວາມ ສຸກ.’” “ເຈົ້າບ່າວຊົມຊື່ນຍິນດີນຳເຈົ້າສາວຂອງຕົນສັນໃດ ພຣະເຈົ້າຂອງເຈົ້າກໍຈະຊົມຊື່ນຍິນດີນຳເຈົ້າ ສັນນັ້ນ.” (ເອຊາຢາ 51:3; 35:2; 62:4, 5). *{GC 302.1}*

ການສະເດັດກັບມາຂອງພຣະຄຣິສ ເປັນຄວາມຫວັງຂອງພວກສາວົກທີ່ແທ້ຈິງຂອງພຣະອົງໃນທຸກຍຸກ ທຸກສະໄໝ. ພຣະສັນຍາຂອງພຣະຜູ້ຊ່ວຍໃຫ້ລອດ ທີ່ຊົງກ່າວໄວ້ເທິງພູເຂົາໝາກກອກເທດວ່າ ພຣະອົງ ຈະສະເດັດກັບມານັ້ນ ເປັນແສງແຫ່ງຄວາມຫວັງໃຫ້ກັບພວກສາວົກຂອງພຣະອົງ, ເຮັດໃຫ້ຈິດໃຈຂອງ ພວກເຂົາເຕັມໄປດ້ວຍຄວາມຊົມຊື່ນຍິນດີ, ເປັນຄວາມຫວັງທີ່ບໍ່ມີຄວາມໂສກເສົ້າ ຫຼື ຄວາມທຸກຍາກ ອັນໃດທີ່ຈະດັບມອດໄປໄດ້. ທ່າມກາງຄວາມທຸກທໍລະມານ ແລະ ການກົດຂີ່ຂົ່ມເຫັງ, “ການມາ ປາກົດຕົວຂອງສະຫງ່າຣາສີຂອງພຣະເຈົ້າອົງຍິ່ງໃຫຍ່ ຄືອົງພຣະເຢຊູຄຣິສເຈົ້າ ພຣະຜູ້ໂຜດໃຫ້ພົ້ນຂອງ ພວກເຮົາ” ເປັນ “ຄວາມຫວັງອັນໜ້າຍິນດີ.” (ຕີໂຕ 2:13). ເມື່ອກຸ່ມຄຣິສຕຽນໃນເມືອງເທສະໂລນີກ ເຕັມໄປດ້ວຍຄວາມໂສກເສົ້າເສຍໃຈທີ່ຕ້ອງຝັງສົບຂອງຄົນທີ່ຕົນຮັກ, ເຊິ່ງເປັນຜູ້ທີ່ເຄີຍຫວັງວ່າຈະມີຊີວິດ ຢູ່ເພື່ອເຫັນການສະເດັດກັບມາຂອງອົງພຣະຜູ້ເປັນເຈົ້າ, ໂປໂລຜູ້ເປັນອາຈານຂອງພວກເຂົາ ໄດ້ຊີ້ໃຫ້ເຂົາ

ທັງຫຼາຍຮູ້ເຖິງການຟື້ນຄືນຊີວິດທີ່ຈະເກີດຂຶ້ນ ເມື່ອພຣະຜູ້ຊ່ວຍໃຫ້ລອດສະເດັດກັບມາ. ເມື່ອນັ້ນຄົນທີ່ເສຍຊີວິດໃນຂະນະທີ່ມີຄວາມເຊື່ອໃນພຣະຄຣິສ ກໍຈະເປັນຂຶ້ນມາໃໝ່ ແລະ ຈະຖືກຮັບໄປພ້ອມກັບຄົນທີ່ຍັງມີຊີວິດຢູ່ ເພື່ອພົບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ. ເພິ່ນກ່າວວ່າ: “ເຮົາຈະຢູ່ກັບອົງພຣະຜູ້ເປັນເຈົ້າຕະຫຼອດໄປເປັນນິດ. ເຫດສະນັ້ນ ຈົ່ງ . . . ໜູນໃຈເຊິ່ງກັນແລະກັນດ້ວຍຂໍ້ຄວາມເຫຼົ່ານີ້.” (1 ເທສະໂລນິກ 4:16–18 LCV). *{GC 302.2}*

ຂະນະທີ່ໂຢຮັນ ສາວົກທີ່ຮັກແພງຂອງພຣະເຢຊູ ຢູ່ເທິງເກາะປັດໂມອັນເປົ່າປ່ຽວນັ້ນ, ເພິ່ນໄດ້ຍິນພຣະສັນຍາວ່າ: “ແນ່ນອນ ເຮົາຈະມາໃນໄວໆນີ້.” ເພິ່ນຈຶ່ງຕອບຮັບພຣະສັນຍານີ້ດ້ວຍຄວາມອາໄລຫາ ເຊິ່ງເປັນຄຳອະທິຖານຂອງຄຣິສຕະຈັກຕະຫຼອດປະຫວັດສາດວ່າ: “ອາແມນ ອົງພຣະເຢຊູເຈົ້າ ເຊີນສະເດັດມາເທີ້ນ!” (ພຣະນິມິດ 22:20). *{GC 302.3}*

ຕະຫຼອດຫຼາຍສະຕະວັດ, ຖ້ອຍຄຳແຫ່ງຄວາມເຊື່ອ ແລະ ຄວາມຫວັງຂອງຜູ້ບໍຣິສຸດ ແລະ ຄົນທີ່ຖືກຂ້າຍ້ອນການເປັນພະຍານຝ່າຍຄວາມຈິງ ໄດ້ຖ່າຍທອດມາຍັງພວກເຮົາຈາກຄຸກມືດໃຕ້ດິນ ແລະ ແດນປະຫານ. ໜຶ່ງໃນຄຣິສຕຽນເຫຼົ່ານີ້ໄດ້ກ່າວວ່າ: “ເມື່ອໄດ້ຮັບຄວາມໝັ້ນໃຈວ່າ ພຣະອົງຊົງຟື້ນຈາກຄວາມຕາຍ ຈົ່ງໝັ້ນໃຈວ່າຕົນເອງກໍຈະຟື້ນເມື່ອພຣະອົງສະເດັດກັບມາ; ດ້ວຍເຫດນີ້, ພວກເຂົາຈຶ່ງບໍ່ຢ້ານກົວຕໍ່ຄວາມຕາຍ ເພາະພວກເຂົາໄດ້ຊະນະຄວາມຕາຍ.”[2] ຄົນເຫຼົ່ານີ້ເຕັມໃຈທີ່ຈະລົງໄປສູ່ຫຸມຝັງສົບ ເພື່ອຈະໄດ້ “ຟື້ນຄືນເປັນອິດສະຫຼະ.”[3] ພວກເຂົາເຝົ້າລໍຖ້າໃຫ້ “ອົງພຣະຜູ້ເປັນເຈົ້າສະເດັດມາຈາກສະຫວັນໃນໝູ່ເມກ ພ້ອມດ້ວຍຣັດສະໝີພາບຂອງພຣະບິດາ” ເພື່ອ “ນຳຣາຊອານາຈັກມາສູ່ຄົນຊອບທຳ.” ສ່ວນຊາວໂວດົວກໍຢຶດຖືຄວາມເຊື່ອດຽວກັນ.[4] ທ່ານ ໄວຕ໌ຟຼິບ ກໍຄອຍຖ້າການປາກົດຕົວຂອງພຣະຜູ້ໄຖ່ ໂດຍຖືວ່ານັ້ນແມ່ນຄວາມຫວັງຂອງຄຣິສຕະຈັກ.[5] *{GC 302.4}*

ລູເທີກ່າວວ່າ: “ຂ້າພະເຈົ້າໝັ້ນໃຈວ່າ ວັນສຳຄັນແຫ່ງການພິພາກສານັ້ນຈະບໍ່ເກີນ 300 ປີ ຂ້າງໜ້າ. ຄິດວ່າພຣະເຈົ້າຈະຊົງອົດທົນຕໍ່ຄວາມຊົ່ວຊ້າໃນໂລກໄດ້ອີກບໍ່ດົນ.” “ວັນສຳຄັນອັນຍິ່ງໃຫຍ່ໃກ້ຈະມາເຖິງແລ້ວ ເຊິ່ງໃນວັນນັ້ນບັນດາອານາຈັກແຫ່ງຄວາມໜ້າກຽດຊັງຈະຖືກໂຄ່ນລົ້ມ.”[6] *{GC 303.1}*

ເມລັງໂທນກ່າວວ່າ: “ໃກ້ຈະເຖິງຈຸດສິ້ນສຸດຂອງໂລກອັນເກົ່າແກ່ນີ້.” ສ່ວນຄາວິນກໍຂໍຮ້ອງຄຣິສຕຽນທັງຫຼາຍວ່າ: “ຢ່າໄດ້ລັງເລໃຈ, ແຕ່ຈົ່ງເຝົ້າປາຖະໜາວັນທີ່ພຣະຄຣິສຈະສະເດັດກັບມາ ໂດຍຖືວ່າເຫດການໃນວັນນັ້ນເປັນມຸງຄຸນທີ່ສຸດ.” ເພິ່ນຍັງກ່າວຕື່ມວ່າ: “ຜູ້ທີ່ສັດຊື່ທັງຫຼາຍຈະຕຶກຕອງເຖິງວັນນັ້ນຢູ່ສະເໝີ.” “ພວກເຮົາຕ້ອງມີຄວາມຫິວກະຫາຍທີ່ຈະພົບພຣະຄຣິສ, ຕ້ອງສະແຫວງຫາວັນນັ້ນ ແລະ ຄິດໄຕ່ຕອງຈົນເຖິງຮຸ່ງອາລຸນຂອງວັນອັນຍິ່ງໃຫຍ່ນັ້ນ; ໃນວັນນັ້ນ ອົງພຣະຜູ້ເປັນເຈົ້າຂອງພວກເຮົາ ຈະສະແດງໃຫ້ເຫັນຣັດສະໝີພາບແຫ່ງອານາຈັກຂອງພຣະອົງຢ່າງເຕັມທີ່.”[7] *{GC 303.2}*

ຈອນ ນັອຄ໌ ນັກປະຕິຮູບຊາວສະກັອດກ່າວວ່າ: “ພຣະເຢຊູເຈົ້າສະເດັດຂຶ້ນສະຫວັນດ້ວຍສະພາບເນື້ອໜັງມະນຸດບໍ່ແມ່ນບໍ? ແລ້ວພຣະອົງຈະບໍ່ສະເດັດກັບມາບໍ? ພວກເຮົາຮູ້ວ່າພຣະອົງຈະສະເດັດກັບມາ ແລະ ຈະສະເດັດມາຢ່າງໄວວາ.” ສ່ວນຣິດລີ ແລະ ລາຕິເມີ, ຜູ້ຍອມສະຫຼະຊີວິດເພື່ອຄວາມຈິງ, ໄດ້ມີຄວາມຫວັງ ແລະ ຄວາມເຊື່ອໃນການສະເດັດກັບມາຂອງພຣະອົງ. ຣິດລີຂຽນ

---

[2] ດານີເອນ ທີ ເທເລີ (Daniel T. Taylor), *ການປົກຄອງຂອງພຣະຄຣິສເທິງແຜ່ນດິນໂລກນີ້: ຫຼື ສຽງຂອງຄຣິສຕະຈັກໃນທຸກສະໄໝ*, ໜ້າ 33.

[3] *ອ້າງອີງຈາກທີ່ດຽວກັນ*, ໜ້າ 54.

[4] *ອ້າງອີງຈາກທີ່ດຽວກັນ*, ໜ້າ 129–132.

[5] *ອ້າງອີງຈາກທີ່ດຽວກັນ*, ໜ້າ 132–134.

[6] *ອ້າງອີງຈາກທີ່ດຽວກັນ*, ໜ້າ 158, 134.

[7] *ອ້າງອີງຈາກທີ່ດຽວກັນ*, ໜ້າ 158, 134.

ວ່າ: “ຂ້າພະເຈົ້າເຊື່ອຈົ່ງເວົ້າອອກມາວ່າ ໂລກນີ້ໃກ້ເຖິງຈຸດຈົບຢ່າງແນ່ນອນ. ຂໍໃຫ້ພວກເຮົາຮ້ອງຫາ ພຣະຄຣິສ ອົງພຣະຜູ້ເປັນເຈົ້າຂອງພວກເຮົາພ້ອມກັບໂຢຮັນຜູ້ຮັບໃຊ້ຂອງພຣະອົງວ່າ: ‘ອົງພຣະເຢຊູເຈົ້າ ເຊີນສະເດັດມາເທີ້ນ.’”[8] *{GC 303.3}*

ສ່ວນ ອາຈານ ແບັກສະເຕີ ໄດ້ກ່າວວ່າ “ຄວາມຄິດເລື່ອງການສະເດັດກັບມາຂອງອົງພຣະຜູ້-ເປັນເຈົ້າ ແມ່ນຄວາມຄິດທີ່ເຮັດໃຫ້ຂ້າພະເຈົ້າໜ້າຊື່ນໃຈບານທີ່ສຸດ.”[9] “ມັນເປັນວຽກງານແຫ່ງຄວາມ ເຊື່ອ ແລະ ເປັນລັກສະນະພິເສດຂອງໄພ່ພົນຂອງພຣະຄຣິສທີ່ຈະຮັກ ແລະ ເຝົ້າລໍຖ້າການສະເດັດ ກັບມາຂອງພຣະອົງ.” “ຖ້າຫາກວ່າຄວາມຕາຍເປັນສັດຕູອັນສຸດທ້າຍທີ່ຈະຖືກທຳລາຍເມື່ອຄົນຟື້ນ ຄືນຊີວິດນັ້ນ, ພວກເຮົາກໍເຂົ້າໃຈວ່າ ເປັນຫຍັງຜູ້ເຊື່ອຈົ່ງຄວນປາຖະໜາ ແລະ ອະທິຖານຂໍການ ສະເດັດມາຄັ້ງທີສອງຂອງພຣະຄຣິສ ເຊິ່ງໃນຕອນນັ້ນຈະໄດ້ໄຊຊະນະຢ່າງສົມບູນ.”[10] “ນີ້ເປັນວັນທີ່ ຜູ້ເຊື່ອທຸກຄົນຄວນປາຖະໜາ, ຄວນເຝົ້າຫວັງ ແລະ ຄວນລໍຖ້າໃນຖານະເປັນວັນທີ່ການໄຖ່ຄືນ ພວກເຂົານັ້ນຈະສຳເລັດຢ່າງສົມບູນ, ທັງເປັນວັນທີ່ຄວາມປາຖະໜາ ແລະ ຄວາມພະຍາຍາມທັງໝົດ ຂອງພວກເຂົາຈະສຳເລັດຄົບຖ້ວນ.” “ໂອ້ ພຣະຜູ້ເປັນເຈົ້າເຈົ້າຂາ, ຂໍຊົງເລັ່ງໃຫ້ວັນນັ້ນມາຮອດໄວ ໆ ແດ່ທ້ອນ!”[11] ນີ້ແມ່ນຄວາມຫວັງຂອງຄຣິສຕະຈັກໃນສະໄໝຂອງພວກອັກຄະສາວົກ, “ຄຣິສຕະຈັກໃນ ປ່າເຂົາ” ແລະ ເປັນຄວາມຫວັງຂອງພວກນັກປະຕິຮູບ. *{GC 303.4}*

ຄຳພະຍາກອນບໍ່ພຽງແຕ່ບອກລ່ວງໜ້າເຖິງວິທີ ແລະ ຈຸດປະສົງຂອງການສະເດັດກັບມາຂອງ ພຣະຄຣິສເທົ່ານັ້ນ ແຕ່ຍັງບອກເຖິງໝາຍສຳຄັນຕ່າງ ໆ ທີ່ຈະເກີດຂຶ້ນ ເພື່ອໃຫ້ມະນຸດຮູ້ວ່າວັນນັ້ນໃກ້ຈະ ມາເຖິງເມື່ອໃດ. ພຣະເຢຊູຊົງກ່າວວ່າ: “ຈະມີໝາຍສຳຄັນໃນດວງອາທິດ, ດວງຈັນ ແລະ ດວງດາວ ທັງປວງ.” (ລູກາ 21:25). “ດວງອາທິດຈະມືດໄປ ດວງຈັນຈະບໍ່ສ່ອງແສງ, ດວງດາວທັງຫຼາຍຈະ ຕົກລົງຈາກສະຫວັນ ແລະ ບັນດາສິ່ງທີ່ມີອຳນາດໃນຟ້າສະຫວັນກໍຈະສັ່ນສະທ້ານຫວັ່ນໄຫວ. ເມື່ອ ນັ້ນເຂົາຈະເຫັນ ‘ບຸດມະນຸດມາປາກົດໃນເມກ’ ດ້ວຍຣິດອຳນາດອັນຍິ່ງໃຫຍ່ ແລະ ດ້ວຍສະຫງ່າຣາສີ ອັນຮຸ່ງເຮືອງ.” (ມາຣະໂກ 13:24–26). ສ່ວນໂຢຮັນຜູ້ຂຽນພຣະທຳພຣະນິມິດ ກໍໄດ້ບັນລະຍາຍ ເຖິງໝາຍສຳຄັນອັນທຳອິດທີ່ຈະເກີດຂຶ້ນກ່ອນການສະເດັດມາຄັ້ງທີສອງຂອງພຣະຄຣິສວ່າ: “ແຜ່ນດິນ ຫວັ່ນໄຫວຢ່າງໃຫຍ່ເກີດຂຶ້ນ, ດວງຕາເວັນມືດດຳເໝືອນເຄື່ອງໄວ້ທຸກ ແລະ ດວງເດືອນກໍກາຍເປັນ ສີແດງເໝືອນເລືອດ.” (ພຣະນິມິດ 6:12). *{GC 304.1}*

ແຜ່ນດິນໂລກສັ່ນສະເທືອນ

ໝາຍສຳຄັນເຫຼົ່ານີ້ເກີດຂຶ້ນກ່ອນສະຕະວັດທີ 19 ຈະເລີ່ມຂຶ້ນ. ໃນປີ 1755 ມີແຜ່ນດິນໄຫວ ເກີດຂຶ້ນຕາມຄຳພະຍາກອນ ແລະ ມີຄວາມຮ້າຍແຮງທີ່ສຸດເທົ່າທີ່ເຄີຍບັນທຶກໄວ້ໃນປະຫວັດສາດ. ເຖິງແມ່ນວ່າ ເປັນທີ່ຮູ້ຈັກກັນທົ່ວໄປໃນຊື່ວ່າແຜ່ນດິນໄຫວແຫ່ງເມືອງລິສບອນ, ແຕ່ແຮງສະເທືອນ ຂອງມັນໄປຮອດສ່ວນຫຼາຍຂອງທະວີບເອີຣົບ, ສ່ວນອາຟຣິກາ ແລະ ອາເມຣິກາກໍຍັງໄດ້ຮູ້ສຶກເຖິງ ແຮງສັ່ນໄຫວຂອງມັນ. ນອກຈາກນັ້ນກຣີນແລນ, ໝູ່ເກາະແຄຣິບຽນ, ເກາະມາເດຣາ, ປະເທດ ນໍເວ, ປະເທດສະວີເດັນ, ອັງກິດ ແລະ ໄອແລນໄດ້ຮັບແຮງສະເທືອນເຊັ່ນກັນ. ພື້ນທີ່ສັ່ນໄຫວຢ່າງ ໜ້ອຍແມ່ນ 4,000,000 ໄມມົນທົນ. ໃນທະວີບອາຟຣິກາແຮງສັ່ນສະເທືອນນັ້ນ ເກືອບຮຸນແຮງເທົ່າ

[8] *ອ້າງອີງຈາກທີ່ດຽວກັນ*, ໜ້າ 151, 145.

[9] *ງານຂຽນຂອງ ຣິດຊາດ ແບັກສະເຕີ* (Richard Baxter), ເຫຼັ້ມ 17, ໜ້າ 555.

[10] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 17, ໜ້າ 500.

[11] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 17, ໜ້າ 182, 183.

ກັບທີ່ເກີດຂຶ້ນໃນທະວີບເອີຣົບ. ສ່ວນໃຫຍ່ຂອງເມືອງອານເຊຍກໍຖືກທຳລາຍ ແລະ ໝູ່ບ້ານແຫ່ງໜຶ່ງ ທີ່ຕັ້ງຢູ່ບໍ່ໄກຈາກເມືອງມາຣາເກັສໃນປະເທດໂມຣັອກໂຄ[12] ກໍຖືກກືນລົງໄປໃຕ້ພື້ນຜິວໂລກ ພ້ອມກັບຜູ້ ອາໄສຢູ່ 8,000 ເຖິງ 10,000 ຄົນ. ມີຄື້ນຊຶນາມິພັດຜ່ານຝັ່ງທະເລຂອງປະເທດແອັດສະປາຍ (Spain) ແລະ ທະວີບອາຟຣິກາ ຊັດຖ້ວມຫຼາຍເມືອງ ແລະ ທຳລາຍຢ່າງກວ້າງຂວາງ. *{GC 304.2}*

ປະເທດແອັດສະປາຍ ແລະ ປອກຕຸຍການໄດ້ຮັບແຮງສະເທືອນຮຸນແຮງທີ່ສຸດ. ທີ່ເມືອງກາດິສ (Cadiz) ຄື້ນຊຶນາມິສູງເຖິງ 60 ຟຸດ. ພູເຂົາທັງຫຼາຍ, "ເຊິ່ງບາງໜ່ວຍໃຫຍ່ທີ່ສຸດຂອງປະເທດປອກຕຸຍ ການ, ໄດ້ສັ່ນສະເທືອນຢ່າງແຮງຄ້າຍຄືກັບວ່າ ມັນສັ່ນໄຫວຈົນຮອດຮາກເຫງົ້າຂອງພູ; ມີຈອມພູບາງ ແຫ່ງແຕກອອກມາຢ່າງໜ້າອັດສະຈັນ ແລະ ຖືກຫວ່ຽງລົງໄປສູ່ຫວ່າງເຂົາດ້ານລຸ່ມ. ມີຄົນເວົ້າວ່າ ເຂົາ ໄດ້ເຫັນແປວໄຟອອກມາຈາກພູເຂົາເຫຼົ່ານັ້ນ."[13] *{GC 304.3}*

ຢູ່ເມືອງລິສບອນ "ໄດ້ຍິນສຽງຄືຟ້າຮ້ອງຢູ່ໃຕ້ພື້ນດິນ ແລ້ວກໍເກີດແຜ່ນດິນໄຫວຢ່າງຮຸນແຮງທັນທີ ເຊິ່ງ ເຮັດໃຫ້ຕຶກອາຄານສ່ວນຫຼາຍໃນເມືອງເພພັງລົງມາ. ໃນໄລຍະເວລາປະມານຫ້ານາທີ ມີ 60,000 ຄົນ ເສຍຊີວິດ. ຕອນທຳອິດທະເລກໍຖອຍອອກໄປຈົນເຫຼືອແຕ່ຊາຍ, ແລ້ວມັນກໍມ້ວນກັບຄືນມາສູງເຖິງ 50 ຟຸດ ເກີນລະດັບປົກກະຕິຂອງມັນ ຫຼື ສູງກວ່ານັ້ນໃນບາງແຫ່ງ." "ໃນບັນດາເຫດການທີ່ ເກີດຂຶ້ນຢ່າງໜ້າປະຫຼາດໃຈໃນລະຫວ່າງໄພພິບັດທີ່ເມືອງລິສບອນນັ້ນ ແມ່ນການຍຸບລົງຂອງທ່າເຮືອ ໃໝ່ລາຄາແພງ ທີ່ສ້າງມາດ້ວຍຫີນອ່ອນ. ຜູ້ຄົນຢ່າງຫຼວງຫຼາຍໄດ້ໄປຮວມຕົວກັນຢູ່ທີ່ນັ້ນເພື່ອຄວາມ ປອດໄພ ເພາະເປັນບ່ອນທີ່ຫ່າງຈາກພວກຕຶກອາຄານທີ່ກຳລັງເພພັງລົງມາ; ແລ້ວໃນທັນໃດນັ້ນ, ທ່າເຮືອ ດັ່ງກ່າວ ພ້ອມຄົນທັງຫຼາຍທີ່ຢືນເທິງທ່າເຮືອນັ້ນ ກໍຍຸບລົງໄປໃນທະເລ ໂດຍບໍ່ມີຊາກສົບລອຍຂຶ້ນມາ ເລີຍ."[14] *{GC 305.1}*

"ແຮງສັ່ນ" ຂອງແຜ່ນດິນໄຫວ "ເຮັດໃຫ້ໂບດວິຫານ ແລະ ສຳນັກນັກບວດທຸກຫຼັງພັງລົງມາ ພ້ອມ ດ້ວຍອາຄານສາທາລະນະຂະໜາດໃຫຍ່ເກືອບທຸກຫຼັງ ແລະ ຫຼາຍກວ່າໜຶ່ງສ່ວນສີ່ຂອງເຮືອນຊານ ປະຊາຊົນ. ຫຼັງແຜ່ນດິນໄຫວປະມານສອງຊົ່ວໂມງ ເກີດໄຟໄໝ້ໃນເຂດຕ່າງ ໆ ທົ່ວເມືອງ ເຊິ່ງເຜົາໄໝ້ ຢ່າງຮຸນແຮງເປັນເວລາເກືອບສາມມື້ ຈົນເມືອງລິສບອນໄດ້ຖືກທຳລາຍຢ່າງຮາບຄາບ. ແຜ່ນດິນໄຫວນັ້ນ ເກີດຂຶ້ນໃນວັນເທດສະການ, ເປັນວັນທີ່ໂບດ ແລະ ສຳນັກນັກບວດເຕັມໄປດ້ວຍຜູ້ຄົນ ເຊິ່ງມີໜ້ອຍຄົນ ທີ່ໜີອອກມາໄດ້."[15] "ຄວາມສະທ້ານຢ້ານກົວຂອງປະຊາຊົນເກີນຄຳບັນຍາຍ. ບໍ່ມີໃຜຮ້ອງໄຫ້ ດ້ວຍວ່າ ເຫດການນັ້ນຮ້າຍແຮງເກີນກວ່າທີ່ຈະມີນ້ຳຕາຮ້ອງໄຫ້ໄດ້. ຄົນທັງຫຼາຍພາກັນແລ່ນກັບໄປກັບມາດ້ວຍ ຄວາມສະຫຼົດຫົດໜູໃຈ ແລະ ຄວາມຕື່ນຕະໜົກຕົກໃຈ, ຕ່າງຄົນຕ່າງຕີໜ້າ ແລະ ໜ້າເອິກຂອງ ຕົນ ແລະຮ້ອງວ່າ, '*ຂໍພຣະເຈົ້າຊົງເມດຕາ! ໂລກກຳລັງດັບສະຫຼາຍເສຍແລ້ວ!*' ຜູ້ເປັນແມ່ກໍລືມລູກຂອງ ຕົນ ແລະ ຫອບເອົາຮູບໄມ້ກາງແຂນແລ່ນໄປມາ. ມັນເປັນເລື່ອງທີ່ໜ້າເສົ້າທີ່ມີຄົນຈຳນວນຫຼາຍແລ່ນໄປ ລີ້ໄພໃນໂບດ, ແຕ່ພິທີທາງສາສະໜາບໍ່ສາມາດຊ່ວຍພວກເຂົາໄດ້; ຜູ້ຄົນທີ່ໜ້າເວດທະນາເຫຼົ່ານີ້ເຂົ້າໄປ ກອດແທ່ນບູຊາ ແລະ ຮູບເຄົາລົບ ແຕ່ກໍໄຮ້ປະໂຫຍດ. ທັງປະຊາຊົນ, ພວກບາດຫຼວງ ແລະ ຮູບເຄົາລົບ ເຫຼົ່ານັ້ນກໍຖືກອາຄານເພພັງລົງມາທັບຖົມພວກເຂົາໄປພ້ອມກັນ." ຕາມການຄາດຄະເນມີ 90,000 ຄົນ ເສຍຊີວິດໃນວັນອັນໂຫດຮ້າຍນັ້ນ. *{GC 305.2}*

---

[12] ຄຳວ່າ "Morocco" ໃນຕົ້ນສະບັບພາສາອັງກິດ ໝາຍເຖິງເມືອງມາຣາເກັສ (Marrakesh) ເຊິ່ງໃນອະດີດມັກຖືກເອີ້ນ ວ່າ Marocco City ຫຼື Morocco City.

[13] ເຊີ ຊານສ໌ ໄລອັນ (Sir Charles Lyell), *ຫຼັກການທໍລະນີສາດ*, ໜ້າ 495.

[14] *ອ້າງອີງຈາກທີ່ດຽວກັນ*, ໜ້າ 495.

[15] *ສາລານຸກົມອາເມຣິກາ* (Encyclopedia Americana) ສະບັບ 1831, ໝາຍເຫດໃນບົດຄວາມ "ເມືອງລິສບອນ".

ດວງອາທິດ ແລະ ດວງຈັນອັບແສງ

ຫຼັງຈາກນັ້ນ 25 ປີ ກໍເກີດໝາຍສຳຄັນອັນຖັດໄປໃນຄຳພະຍາກອນ ຄືການມືດລົງຂອງດວງຕາເວັນ ແລະ ດວງຈັນ. ສິ່ງທີ່ເຮັດໃຫ້ໝາຍສຳຄັນນີ້ຍິ່ງໜ້າປະທັບໃຈຫຼາຍ ຄືຄຳພະຍາກອນໄດ້ລະບຸເວລາທີ່ມັນຈະເກີດຂຶ້ນລ່ວງໜ້າຢ່າງແນ່ນອນ. ເມື່ອພຣະຜູ້ຊ່ວຍໃຫ້ລອດຊົງສົນທະນາກັບພວກສາວົກຂອງພຣະອົງເທິງພູເຂົາໝາກກອກເທດ, ພຣະອົງໄດ້ບັນລະຍາຍເຖິງໄລຍະເວລາອັນດົນນານທີ່ຄຣິສຕະຈັກຈະຕ້ອງປະສົບກັບການທົດລອງ ຄືເວລາ 1,260 ປີ ທີ່ລະບອບສັນຕະປາປາກົດຂີ່ຂົ່ມເຫັງຄົນຂອງພຣະເຈົ້າ; ພຣະອົງຊົງສັນຍາໄວ້ວ່າ ເວລາແຫ່ງການກົດຂີ່ຂົ່ມເຫັງທີ່ຈະເກີດຂຶ້ນນັ້ນຈະສັ້ນລົງ. ຫຼັງຈາກນັ້ນ, ພຣະອົງຊົງກ່າວເຖິງເຫດການບາງຢ່າງທີ່ຈະເກີດຂຶ້ນ ກ່ອນການສະເດັດກັບມາຂອງພຣະອົງ ແລະ ໄດ້ລະບຸເວລາທີ່ໝາຍສຳຄັນທຳອິດຈະປາກົດຂຶ້ນວ່າ: “ໃນວັນເຫຼົ່ານັ້ນ ຫຼັງຈາກເວລາແຫ່ງຄວາມທຸກລຳບາກຜ່ານພົ້ນໄປແລ້ວ ດວງອາທິດຈະມືດໄປ ດວງຈັນຈະບໍ່ສ່ອງແສງ.” (ມາຣະໂກ 13:24). ໃນຄຳພະຍາກອນ 1,260 ວັນ ໝາຍເຖິງ 1,260 ປີ ເຊິ່ງໄລຍະເວລາດັ່ງກ່າວໄດ້ສິ້ນສຸດລົງໃນປີ 1798. ແຕ່ກ່ອນທີ່ເວລານັ້ນໄດ້ສຳເລັດເສັດສິ້ນປະມານ 25 ປີ ການຂົ່ມເຫັງໄດ້ສິ້ນສຸດລົງເກືອບທັງໝົດ. ພຣະຄຣິສຊົງກ່າວວ່າ ຫຼັງຈາກການຂົ່ມເຫັງຍຸຕິລົງ ດວງຕາເວັນຈະຕ້ອງມືດມົວ, ເຊິ່ງໃນວັນທີ 19 ພຶດສະພາ 1780 ຄຳພະຍາກອນນີ້ໄດ້ສຳເລັດເປັນຈິງ. *{GC 306.1}*

“ສິ່ງທີ່ເກືອບຈະໜ້າປະຫຼາດໃຈທີ່ສຸດ ຫຼື ວ່າປະຫຼາດທີ່ສຸດກໍວ່າໄດ້ ແລະ ເປັນປາກົດການທີ່ເລິກລັບອະທິບາຍບໍ່ໄດ້ . . . ຄືວັນອັນມືດມົວນັ້ນ ເຊິ່ງເກີດຂຶ້ນກົງກັບວັນທີ 19 ເດືອນພຶດສະພາ ປີ 1780, ເປັນມື້ທີ່ທ້ອງຟ້າ ແລະ ຊັ້ນບັນຍາກາດມືດມົວທີ່ສຸດໃນບັນດາລັດຂອງເຂດນິວອິງແລນ.”[16] *{GC 306.2}*

ຜູ້ເຫັນເຫດການຄົນໜຶ່ງທີ່ອາໄສຢູ່ໃນລັດແມັສຊາຊູເສັດ ໄດ້ບັນລະຍາຍເຖິງເຫດການນັ້ນດັ່ງນີ້ວ່າ: “ໃນຕອນເຊົ້າ ຕາເວັນຂຶ້ນຢ່າງແຈ່ມແຈ້ງສົດໃສ, ແຕ່ບໍ່ດົນຟ້າກໍມືດລົງ, ມີເມກດຳລົງມາປົກຄຸມຢ່າງໜ້າຢ້ານກົວ ແລ້ວກໍເກີດຟ້າແມບຟ້າຮ້ອງ ແລະ ຝົນຕົກໜ້ອຍໜຶ່ງ. ປະມານ 9 ໂມງເຊົ້າ ເມກກໍບາງລົງ ແລະ ກາຍເປັນສີທອງ ຫຼື ສີທອງແດງ, ສ່ວນແຜ່ນດິນ, ຫີນ, ຕົ້ນໄມ້, ອາຄານ, ນ້ຳ ແລະ ຄົນກໍປ່ຽນເປັນສີປະຫຼາດ ເໝືອນແສງທີ່ສ່ອງມານັ້ນບໍ່ແມ່ນຂອງໂລກນີ້. ສອງສາມນາທີຕໍ່ມາ ກໍມີເມກດຳມາປົກຄຸມຢູ່ທົ່ວຟ້າ, ຍົກເວັ້ນທີ່ຂອບຟ້າມີຂອບແສງຢູ່ບາງ ໆ; ຄວາມມືດໃນຂະນະນັ້ນເໝືອນຄວາມມືດຂອງເວລາ 9 ໂມງແລງໃນລະດູຮ້ອນ. . . .” *{GC 306.3}*

“ປະຊາຊົນທັງຫຼາຍເຕັມໄປດ້ວຍຄວາມວິຕົກກັງວົນ, ຄວາມຢ້ານກົວ ແລະ ຄວາມປະຫຼາດໃຈ. ພວກແມ່ຍິງຢືນຢູ່ທີ່ປະຕູເຮືອນ ແລະ ຫຼຽວເບິ່ງອອກໄປໃນຄວາມມືດ; ພວກຜູ້ຊາຍກໍກັບມາຈາກວຽກງານໃນໄຮ່ນາ; ພວກຊ່າງໄມ້ກໍປະເຄື່ອງມືຂອງຕົນ, ຊ່າງຕີເຫຼັກກໍປະເຕົ່າຫຼອມ ແລະ ພໍ່ຄ້າກໍປະເຄື່ອງຂອງຕົນ. ມີການປະກາດເລີກໂຮງຮຽນ, ສ່ວນເດັກນ້ອຍກໍແລ່ນຕົວສັ່ນກັບບ້ານ. ຜູ້ເດີນທາງຂໍຢຸດພັກຢູ່ເຮືອນຊາວນາທີ່ໃກ້ທີ່ສຸດ. ຕ່າງຄົນຕ່າງຖາມຂຶ້ນວ່າ ‘ຈະເກີດຫຍັງຂຶ້ນ?’ ເບິ່ງຄືວ່າກຳລັງຈະເກີດລົມພະຍຸແຮງມາພັດຖະຫຼົ່ມໃສ່ແຜ່ນດິນ, ຫຼືວ່ານີ້ແມ່ນວັນສິ້ນສຸດຂອງສັບພະສິ່ງທັງປວງ.” *{GC 306.4}*

“ມີການຈູດທຽນ ແລະ ດັ່ງໄຟສະຫວ່າງສະໄຫວ ເໝືອນທີ່ຈູດກັນໃນຄືນເດືອນມືດແຫ່ງລະດູໃບໄມ້ຫຼົ່ນ. . . . ໄກ່ກໍກັບມາເກາະຄອນນອນຫຼັບ, ຝູງົ້ວພາກັນສົ່ງສຽງໂບ້ ໆ ຢູ່ທີ່ຮົ້ວຂອງທົ່ງຫຍ້າ, ກົບຂຽດກໍຮ້ອງສຽງດັງອ໊ອກແອ໊ກອ໊ອກແອ໊ກ, ບັນດານົກກໍບັນເລງເພງປະຈຳຍາມແລງ ແລະ ມີຝູງເຈຍບິນໄປມາ, ແຕ່ມະນຸດທັງຫຼາຍຮູ້ວ່າເວລາຄ່ຳຄືນຍັງມາບໍ່ຮອດ. . . .” *{GC 307.1}*

“ດຣ. ນະທານາເອັນ ວິດທາເກີ ອາຈານປະຈຳໂບດແທເບີແນເກີນແຫ່ງເມືອງຊາເລັມ,[17] ໄດ້ຈັດ

[16] ອາ. ເອັມ. ເດເວນ (R. M. Devens), *ສະຕະວັດທຳອິດຂອງພວກເຮົາ*, ໜ້າ 89.

[17] Dr. Nathanael Whittaker of the Tabernacle church in Salem.

ພິທີໃນຫ້ອງປະຊຸມຂອງໂບດ ແລະ ໃນຄຳເທດສະໜານັ້ນ ເພີ່ນຢືນຢັນວ່າ ຄວາມມືດດັ່ງກ່າວ ເປັນປາກົດການເໜືອທຳມະຊາດ. ມີຄົນມາເຕົ້າໂຮມກັນໃນບ່ອນຕ່າງໆ; ຂໍ້ພຣະຄຳພີທີ່ໃຊ້ປະກອບ ການເທດສະໜາເຫຼົ່ານັ້ນ ໜັງບໍ່ພິມຂໍ້ຄວາມທີ່ສະແດງໃຫ້ເຫັນວ່າ ຄວາມມືດທີ່ເກີດຂຶ້ນສອດຄ່ອງກັບ ຄຳພະຍາກອນໃນພຣະຄຳພີ. . . . ຄວາມມືດນັ້ນໜາທຶບທີ່ສຸດຫຼັງຈາກ 11 ໂມງເຊົ້າບໍ່ດົນ."[18] "ສ່ວນ ໃຫຍ່ຂອງປະເທດ[19] ເກີດຄວາມມືດໃນກາງເວັນຫຼາຍ ຈົນປະຊາຊົນເບິ່ງບໍ່ເຫັນໂມງ ແລະ ບໍ່ສາມາດ ກິນເຂົ້າ ຫຼື ຈັດການທຸລະໃນບ້ານໄດ້ໂດຍບໍ່ມີແສງທຽນ. . . ." *{GC 307.2}*

"ຂອບເຂດຄວາມມືດນັ້ນກວ້າງຂວາງຫຼາຍແທ້. ຕັ້ງແຕ່ເມືອງຟັນມາວ (Falmouth) ໃນດ້ານ ຕາເວັນອອກ, ຈົນສຸດພົ້ມແດນຂອງລັດຄ້ອນເນັກຕິກັດ (Connecticut) ແລະ ກາຍໄປຈົນຮອດເມືອງ ອານບານີ (Albany) ໃນດ້ານຕາເວັນຕົກ. ສ່ວນທາງດ້ານທິດໃຕ້ ຄວາມມືດກຳປົກຄຸມຮອດແຄມ ທະເລ ແລະ ທາງເໜືອເຖິງສຸດໝູ່ບ້ານຂອງຊາວອາເມຣິກາ."[20] *{GC 307.3}*

ດວງຈັນກາຍເປັນສີເລືອດ

ກ່ອນຕາເວັນຕົກໜຶ່ງ ຫຼື ສອງຊົ່ວໂມງ ຄວາມມືດອັນໜາທຶບໄດ້ຈາງຫາຍໄປ, ດວງອາທິດປາກົດ ອອກມາ, ເຖິງແມ່ນວ່າມັນຍັງຖືກປິດບັງໄວ້ໂດຍໝອກດຳກໍຕາມ. "ຫຼັງຕາເວັນຕົກກໍມີເມກມາປົກຄຸມ ອີກ ແລ້ວກໍມືດລົງຢ່າງໄວວ." "ແຕ່ຄວາມມືດຂອງຄືນນັ້ນບໍ່ປົກກະຕິ ແລະ ເປັນຕາຢ້ານເໝືອນກັບ ຄວາມມືດໃນກາງເວັນ; ເຖິງແມ່ນວ່າເປັນຄືນເດືອນແຈ້ງ ແຕ່ກໍບໍ່ສາມາດເຫັນຫຍັງໄດ້ຖ້າບໍ່ຈູດໄຟມາ ສ່ອງ. ເມື່ອເບິ່ງແສງໄຟໃນເຮືອນຂອງເພື່ອນບ້ານ ກໍເຫັນແຕ່ຄວາມສະຫຼົວໆ ຄືກັບຄວາມມືດດຳຂອງ ເອຢິບ ທີ່ແສງໄຟບໍ່ສາມາດສ່ອງທະລຸໄດ້."[21] ມີຜູ້ເຫັນເຫດການນັ້ນກ່າວວ່າ: "ຄາວນັ້ນຂ້າພະເຈົ້າອົດ ຄິດບໍ່ໄດ້ວ່າ ຖ້າດວງສະຫວ່າງທັງຫຼາຍໃນຈັກກະວານໄດ້ຖືກປົກຄຸມດ້ວຍຜ້າດຳອັນໜາທຶບ ຫຼື ຖືກລຶບ ອອກຈາກທ້ອງຟ້າ ກໍຄົງບໍ່ມືດມົວກວ່າຄືນນັ້ນເລີຍ."[22] ເຖິງແມ່ນວ່າເກົ້າໂມງໃນຄືນນັ້ນດວງຈັນຂຶ້ນເຕັມ ດວງ, ແຕ່ "ມັນບໍ່ສາມາດຂັບໄລ່ເງົາອັນມືດດຳຄືຄວາມຕາຍໄປໄດ້ເລີຍ." ຫຼັງທ່ຽງຄືນຄວາມມືດກໍຫາຍ ໄປ, ແຕ່ເມື່ອດວງຈັນປາກົດໃຫ້ເຫັນ ມັນມີສີແດງເໝືອນເລືອດ. *{GC 307.4}*

ວັນທີ 19 ພຶດສະພາ 1780 ຖືກບັນທຶກໄວ້ໃນປະຫວັດສາດວ່າ ເປັນ "ວັນມືດ." ນັບຕັ້ງແຕ່ສະໄໝ ຂອງໂມເຊ ເທົ່າທີ່ມີການບັນທຶກມາ ບໍ່ເຄີຍມີເວລາແຫ່ງຄວາມມືດທີ່ໜາທຶບທີ່ສຸດ, ປົກຄຸມພື້ນທີ່ຢ່າງ ກວ້າງຂວາງທີ່ສຸດ ແລະ ໃຊ້ເວລາອັນຍາວນານທີ່ສຸດເທົ່າກັບວັນນັ້ນເລີຍ. ຄຳບັນລະຍາຍຂອງບັນດາຜູ້ ເຫັນເຫດການ ສະທ້ອນເຖິງຖ້ອຍຄຳຂອງພຣະເຈົ້າທີ່ຊົງກ່າວລ່ວງໜ້າ 2,500 ປີ ຜ່ານຜູ້ເຜີຍພຣະທຳ ໂຢເອນວ່າ: "ກ່ອນມື້ຍິ່ງໃຫຍ່ໜ້າຢ້ານຂອງອົງພຣະຜູ້ເປັນເຈົ້າມາເຖິງ ອາທິດຈະມືດມົວ ທັງເດືອນຈະ ເປັນສີແດງດັ່ງເລືອດ." (ໂຢເອນ 2:31 LO2012). *{GC 308.1}*

ພຣະຄຣິສຊົງເຕືອນຄົນຂອງພຣະອົງ ໃຫ້ເຝົ້າເບິ່ງໝາຍສຳຄັນຂອງການສະເດັດກັບມາຂອງພຣະອົງ ແລະ ໃຫ້ຊົມຊື່ນຍິນດີເມື່ອສັງເກດເຫັນສັນຍະລັກທີ່ບົ່ງບອກວ່າ ພຣະຣາຊາຂອງພວກເຂົາໃກ້ຈະສະເດັດ ມາ. ພຣະອົງຊົງກ່າວວ່າ: "ເມື່ອເຫດການເຫຼົ່ານີ້ເລີ່ມເກີດຂຶ້ນ ພວກເຈົ້າຈົ່ງລຸກຢືນ ແລະ ເງີຍຫົວ

[18] ວາລະສານ *The Essex Antiquarian*, ສະບັບເມສາ, 1899, (ເຫຼັ້ມ 3, ສະບັບ 4, ໜ້າ 53, 54).

[19] ໝາຍເຖິງເຂດນິວອິງແລນຂອງອາເມຣິກາເປັນຫຼັກ, ບໍ່ແມ່ນປະເທດອາເມຣິກາທັງໝົດ.

[20] ວິນລຽມ ໂກດອນ (William Gordon), *ປະຫວັດເອກະລາດຂອງສະຫະລັດອາເມຣິກາຕັ້ງແຕ່ເລີ່ມຕົ້ນ, ໄລຍະພັດທະນາ ແລະ ການສະຖາປະນາ*, ເຫຼັ້ມ 3, ໜ້າ 57.

[21] ເອຊາຢາ ໂທມັດ (Isaiah Thomas), ໜັງສືພິມ *Massachusetts Spy; or, American Oracle of Liberty*, ເຫຼັ້ມ 10, ສະບັບ 472, ພຶດສະພາ 25, 1780.

[22] ຈົດໝາຍຂອງ ດຣ. ຊາມູເອນ ເທັນນີ ແຫ່ງເມືອງແອັກສະເທີ, ລັດນິວແฮมຊາຍ; ເດືອນທັນວາ 1785 ຕາມທີ່ບັນທຶກໄວ້ ໃນ *ປະມວນເອກະສານຂອງສະມາຄົມປະຫວັດສາດຂອງລັດແມັສຊາຊູເສັດ* 1792, ໝວດ 1, ເຫຼັ້ມ 1, ໜ້າ 97.

ຂຶ້ນ ເພາະຄວາມພົ້ນຂອງພວກເຈົ້າໃກ້ຈະມາເຖິງແລ້ວ.” ພຣະອົງຊົງຊີ້ໃຫ້ຜູ້ຕິດຕາມພຣະອົງເບິ່ງຕົ້ນໄມ້ ໃນລະດູໃບໄມ້ປົ່ງ ແລະ ຊົງກ່າວວ່າ: “ເມື່ອເຈົ້າທັງຫຼາຍເຫັນໃບຂອງມັນເລີ່ມປົ່ງ ພວກເຈົ້າກໍຮູ້ວ່າໃກ້ຈະເຖິງລະດູຮ້ອນແລ້ວ. ຢ່າງດຽວກັນນັ້ນແຫຼະ ເມື່ອພວກເຈົ້າເຫັນເຫດການເຫຼົ່ານີ້ກຳລັງເກີດຂຶ້ນ ພວກເຈົ້າຈົ່ງຮູ້ວ່າ ອານາຈັກຂອງພຣະເຈົ້າໃກ້ຈະມາເຖິງແລ້ວ.” (ລູກາ 21:28, 30, 31). *{GC 308.2}*

ແຕ່ເມື່ອຄວາມຖ່ອມຕົວ ແລະ ການອຸທິດຕົນໃນຄຣິສຕະຈັກໄດ້ປ່ຽນເປັນຄວາມທະນົງຕົວ ແລະ ການເນັ້ນພິທີກຳ, ຄວາມຮັກທີ່ມີຕໍ່ພຣະຄຣິສ ແລະ ຄວາມເຊື່ອໃນການສະເດັດກັບມາຂອງພຣະອົງກໍກາຍເປັນຄວາມເຢັນຊາ. ຄົນທີ່ອ້າງຕົວວ່າເປັນໄພ່ພົນຂອງພຣະເຈົ້າ ພັດໝົກໝົ້ນຢູ່ກັບການໃຊ້ຊີວິດເໝືອນຊາວໂລກ ແລະ ໃນການສະແຫວງຫາຄວາມບັນເທີງ ຈົນພວກເຂົາຕາບອດເບິ່ງບໍ່ເຫັນຄຳແນະນຳຂອງພຣະຜູ້ຊ່ວຍໃຫ້ລອດກ່ຽວກັບໝາຍສຳຄັນຂອງການສະເດັດມາຂອງພຣະອົງ. ພວກເຂົາບໍ່ໄດ້ໃສ່ໃຈຕໍ່ຄຳສອນເລື່ອງການສະເດັດກັບມາ; ສ່ວນຂໍ້ພຣະຄຳພີທີ່ກ່ຽວຂ້ອງກັບການສະເດັດກັບມານັ້ນ ກໍຖືກປິດບັງໄວ້ດ້ວຍຄຳອະທິບາຍທີ່ບໍ່ຖືກຕ້ອງ, ຈົນຄົນສ່ວນຫຼາຍບໍ່ສົນໃຈ; ຄົນທັງຫຼາຍພາກັນລືມຄຳສອນນັ້ນໄປ. ສະພາບການເຊັ່ນນີ້ປາກົດຂຶ້ນ ໂດຍສະເພາະແມ່ນໃນບັນດາຄຣິສຕະຈັກຂອງອາເມຣິກາ. ອິດສະຫຼະພາບ ແລະ ການຢູ່ເຢັນເປັນສຸກຂອງທຸກຊົນຊັ້ນໃນສັງຄົມ, ຄວາມທະເຍີທະຍານເພື່ອຫາຄວາມຮັ່ງມີ ແລະ ຄວາມຫຼົງໃຫຼເພີ່ມເພີ່ມຂຶ້ນຈົນຜູ້ຄົນໝົກໝົ້ນຢູ່ກັບການຫາເງິນ, ຄວາມກະຕືລືລົ້ນທີ່ຈະມີອຳນາດ ແລະ ເປັນທີ່ນິຍົມຊົມຊອບຂອງຄົນອື່ນ ເຊິ່ງເປັນຄວາມໃຝ່ຝັນທີ່ເບິ່ງຄືວ່າທຸກຄົນສາມາດຄວ້າເອົາໄດ້, ທັງໝົດນີ້ນຳພາມະນຸດໃຫ້ຫວັງ ແລະ ໃສ່ໃຈກັບຊີວິດນີ້ ພ້ອມເປັນເຫດໃຫ້ພວກເຂົາສະຫຼຸບວ່າ ວັນສຳຄັນຍິ່ງໃຫຍ່ນັ້ນ ເມື່ອລະບຽບຕ່າງ ໆ ໃນປັດຈຸບັນຈະຜ່ານພົ້ນໄປ ກໍຍັງອີກດົນຫຼາຍ. *{GC 309.1}*

ຈົ່ງກຽມຕົວໃຫ້ພ້ອມ

ເມື່ອພຣະຜູ້ຊ່ວຍໃຫ້ລອດ ຊົງຊີ້ໃຫ້ພວກສາວົກຂອງພຣະອົງ ຮູ້ເຖິງໝາຍສຳຄັນຂອງການສະເດັດກັບມາຂອງພຣະອົງ, ພຣະອົງຊົງບອກລ່ວງໜ້າເຖິງການຫຼົງຈາກຄວາມເຊື່ອທີ່ຈະເກີດຂຶ້ນກ່ອນທີ່ພຣະອົງຈະສະເດັດກັບມາ. ຈະມີສະພາບເໝືອນກັບໃນສະໄໝຂອງໂນອາ; ຄົນທັງຫຼາຍຈະສາລະວົນກັບທຸລະກິດການງານ ແລະ ການສະແຫວງຫາຄວາມບັນເທີງໃຈ; ພວກເຂົາຈະເຮັດການຊື້ຂາຍ, ການປູກຝັງ, ການກໍ່ສ້າງ, ການແຕ່ງງານ ແລະ ການມອບລູກສາວໃຫ້ແຕ່ງງານ ໂດຍພວກເຂົາລືມພຣະເຈົ້າ ແລະ ຊີວິດໃນພາຍພາກໜ້າ. ພຣະຄຣິສຊົງເຕືອນຜູ້ມີຊີວິດໃນປັດຈຸບັນນີ້ວ່າ: “ຈົ່ງຄອຍລະວັງຕົວໃຫ້ດີ ຢ່າສູ່ໃຫ້ຈິດໃຈຂອງເຈົ້າທັງຫຼາຍໜັກໄປໃນການກິນລ້ຽງ ແລະ ດື່ມເຫຼົ້າເມົາສຸຣາ ແລະ ໃນການວິຕົກກັງວົນເຖິງຊີວິດນີ້, ບໍ່ດັ່ງນັ້ນແລ້ວ ວັນນັ້ນກໍຈະຫຼອນມາຕົກຖືກພວກເຈົ້າຢ່າງບໍ່ຄາດຄິດ.” “ດັ່ງນັ້ນ ຈົ່ງເຝົ້າລະວັງ ແລະ ພາວັນນາອະທິຖານຢູ່ທຸກເວລາ ເພື່ອວ່າພວກເຈົ້າຈະມີກຳລັງພົ້ນຈາກເຫດການທຸກຢ່າງທີ່ໃກ້ຈະເກີດຂຶ້ນນັ້ນ ແລະ ຢືນຢູ່ຕໍ່ໜ້າບຸດມະນຸດໄດ້.” (ລູກາ 21:34, 36). *{GC 309.2}*

ພຣະຜູ້ຊ່ວຍໃຫ້ລອດ ຊົງກ່າວເຖິງສະພາບຂອງຄຣິສຕະຈັກໃນເວລານັ້ນໃນພຣະທຳພຣະນິມິດວ່າ: “ເຈົ້າໄດ້ຊື່ວ່າມີຊີວິດຢູ່ ແຕ່ວ່າເຈົ້າໄດ້ຕາຍເສຍແລ້ວ.” ສ່ວນຜູ້ທີ່ຄິດວ່າຕົວເອງປອດໄພດີຈົນບໍ່ຍອມຕື່ນຂຶ້ນລະວັງຕົວ ພຣະອົງຊົງເຕືອນຢ່າງໜັກແໜ້ນວ່າ: “ຖ້າເຈົ້າບໍ່ຕື່ນຂຶ້ນ ເຮົາຈະມາຫາເຈົ້າເໝືອນດັ່ງຂະໂມຍ ແລະ ເຈົ້າຈະບໍ່ຮູ້ວ່າຍາມໃດເຮົາຈະມາຫາເຈົ້າ.” (ພຣະນິມິດ 3:1 TKJV, 3). *{GC 309.3}*

ຈຳເປັນຕ້ອງມີການເຕືອນມະນຸດໃຫ້ຕື່ນຂຶ້ນ ເພື່ອລະວັງອັນຕະລາຍ, ຄືໃຫ້ຕື່ນຂຶ້ນເພື່ອກຽມຕົວ

ສຳລັບເຫດການສຳຄັນຕ່າງ ໆ ທີ່ຈະເກີດຂຶ້ນ; ເຊິ່ງເປັນເຫດການ ທີ່ກ່ຽວຂ້ອງກັບການສິ້ນສຸດໂອກາດ ແຫ່ງຄວາມເມດຕາຂອງພຣະເຈົ້າ. ຜູ້ເຜີຍພຣະທຳຂອງພຣະເຈົ້າກ່າວວ່າ: “ວັນແຫ່ງພຣະເຈົ້າຢາເວກໍ ຍິ່ງໃຫຍ່; ແລະ ມັນເປັນຕາຢ້ານຫຼາຍ. ຜູ້ໃດຈະສາມາດທົນຢູ່ໄດ້?” ຜູ້ໃດຈະຢືນຢູ່ໄດ້ເມື່ອພຣະອົງສະເດັດ ມາ? ເພາະ “ຕາຂອງພຣະອົງແສນບໍຣິສຸດຍິ່ງ ເກີນກວ່າທີ່ຈະເບິ່ງຄວາມຊົ່ວຊ້າໄດ້ ແລະ ພຣະອົງກໍ ບໍ່ອາດທົນຕໍ່ພາບຂອງປະຊາຊົນທີ່ເຮັດຜິດໄດ້.” (ໂຢເອນ 2:11 LCV; ຮາບາກຸກ 1:13). ສຳລັບ ຜູ້ທີ່ “ເອີ້ນ [ພຣະເຈົ້າ] ວ່າເປັນພຣະເຈົ້າຂອງພວກເຂົາ ແລະ ອ້າງວ່າພວກເຂົາເປັນປະຊາຊົນ ຂອງ [ພຣະອົງ],” ແຕ່ໄດ້ລ່ວງລະເມີດພັນທະສັນຍາຂອງພຣະອົງ ແລະ ໄດ້ຫຼົງໄປຕາມພຣະອື່ນ, ໄດ້ ລີ້ຊ່ອນຄວາມຊົ່ວຮ້າຍຢູ່ໃນໃຈ ແລະ ຮັກເສັ້ນທາງແຫ່ງຄວາມຊົ່ວ: ສຳລັບຄົນເຊັ່ນນີ້ ວັນສຳຄັນຂອງ ອົງພຣະຜູ້ເປັນເຈົ້າຈະເປັນ “ຄວາມມືດ ບໍ່ແມ່ນຄວາມສະຫວ່າງ, ເປັນຄວາມມືດມິດ ແລະ ບໍ່ມີ ຄວາມແຈ່ມໃສເລີຍ.” (ໂຮເສອາ 8:2, 1; ເພງສັນລະເສີນ 16:4; ອາໂມດ 5:20 ດັດແປງຈາກ ສະບັບ TKJV). ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ, “ໃນເວລານັ້ນ ເຮົາຈະຖືໂຄມໄຟອັນໜຶ່ງ ເຍືອງ ຄົ້ນຫານະຄອນເຢຣູຊາເລັມ. ເຮົາຈະລົງໂທດປະຊາຊົນທີ່ສ້າງຄວາມອີ່ມອົກອີ່ມໃຈວ່າ, ‘ບໍ່ວ່າຮ້າຍຫຼື ດີ ອົງພຣະຜູ້ເປັນເຈົ້າເຮັດຫຍັງບໍ່ໄດ້ດອກ.’” (ເຊຟານີຢາ 1:12 LO2012). “ເຮົາຈະນຳໄພພິບັດມາ ເທິງແຜ່ນດິນໂລກ ແລະ ລົງໂທດຄົນຊົ່ວຮ້າຍທຸກຄົນເພາະການບາບຂອງພວກເຂົາ. ເຮົາຈະເຮັດໃຫ້ຄົນ ອວດອົ່ງຈອງຫອງທຸກຄົນຖ່ອມໃຈ ແລະ ຈະລົງໂທດຄົນອວດດີ ແລະ ຄົນຮ້າຍກາດທຸກຄົນ.” (ເອຊາຢາ 13:11). “ໃນມື້ນັ້ນ . . . ແມ່ນແຕ່ເງິນ ແລະ ຄຳທັງໝົດທີ່ພວກເຂົາມີຢູ່ ກໍຈະຊ່ວຍຫຍັງພວກເຂົາບໍ່ ໄດ້.” “ຊັບສົມບັດຂອງພວກເຂົາຈະຖືກປຸ້ນ ແລະ ເຮືອນຂອງພວກເຂົາຈະຖືກທຳລາຍ.” (ເຊຟານີຢາ 1:18, 13). *{GC 310.1}*

ສ່ວນຜູ້ເຜີຍພຣະທຳເຢເຣມີຢາ ເຫັນລ່ວງໜ້າເຖິງເວລາອັນເປັນຕາຢ້ານນີ້ ແລ້ວກ່າວວ່າ: “ຄວາມ ເຈັບປວດ! ຂ້ານ້ອຍທົນຕໍ່ໄປບໍ່ໄຫວ . . . ຂ້ານ້ອຍມິດງຽບຢູ່ບໍ່ໄດ້ອີກຕໍ່ໄປ ຂ້ານ້ອຍໄດ້ຍິນສຽງແກ ແລະ ສຽງ ຮ້ອງການສູ້ຮົບ ໄພພິບັດໜຶ່ງແລ້ວ ໄພພິບັດອື່ນຊ້ຳຕິດຕາມມາ.” (ເຢເຣມີຢາ 4:19, 20). *{GC 310.2}*

“ມັນຈະເປັນມື້ແຫ່ງຄວາມໂກດຮ້າຍໃຫຍ່ ມື້ແຫ່ງຄວາມເດືອດຮ້ອນ ແລະ ເປັນທຸກໃຈຫຼາຍ ມື້ ແຫ່ງການຮົກຮ້າງເພພັງ ແລະ ຈິບຫາຍ ມື້ແຫ່ງຄວາມມືດຕຶບ ແລະ ໝົ່ນໝອງ ມື້ແຫ່ງເມກໝອກ ດຳ ມື້ທີ່ເຕັມໄປດ້ວຍສຽງແກລະດົນພົນເຮັດເສິກ ແລະ ສຽງຂອງພວກທະຫານໂຮ່ຮ້ອງໃນສະໜາມ ຮົບ.” (ເຊຟານີຢາ 1:15, 16). “ມື້ຂອງອົງພຣະຜູ້ເປັນເຈົ້າກຳລັງມາ . . . ໂລກຈະເປັນຖິ່ນແຫ້ງແລ້ງ ກັນດານ ແລະ ຄົນບາບທຸກຄົນຈະຖືກທຳລາຍ.” (ເອຊາຢາ 13:9 LO2012). *{GC 310.3}*

ພຣະຄຳຂອງພຣະເຈົ້າໃຊ້ຖ້ອຍຄຳທີ່ໜັກແໜ້ນເມື່ອກ່າວເຖິງວັນຍິ່ງໃຫຍ່ນັ້ນ ແລະ ຮຽກຮ້ອງໃຫ້ ຄົນຂອງພຣະເຈົ້າຕື່ນຂຶ້ນຈາກຄວາມງ່ວງຊຶມດ້ານຈິດວິນຍານ ແລະ ສະແຫວງຫາພຣະອົງດ້ວຍການ ຖ່ອມຕົວກັບໃຈວ່າ: “ຈົ່ງເປົ່າແກທີ່ໃນຊີໂອນ, ຈົ່ງຮ້ອງສຽງປຸກເທິງພູເຂົາບໍຣິສຸດຂອງເຮົາ, ໃຫ້ຊາວ ແຜ່ນດິນທັງຫຼາຍຕົວສັ່ນ, ເພາະວ່າ ວັນຂອງອົງພຣະຜູ້ເປັນເຈົ້າກຳລັງມາ, ວັນນັ້ນພວມຫຍັບເຂົ້າມາ ໃກ້ແລ້ວ.” “ຈົ່ງສັ່ງໃຫ້ອົດອາຫານ ແລະ ເອີ້ນປະຊຸມກັນເຖີດ; ຈົ່ງບອກປະຊາຊົນໃຫ້ເຂົ້າມາເຕົ້າໂຮມ ກັນ ກຽມພວກເຂົາໃຫ້ເຂົ້າຮ່ວມການປະຊຸມອັນສັກສິດນີ້; ຈົ່ງນຳພວກເຖົ້າແກ່ ແລະ ເຕົ້າໂຮມເດັກນ້ອຍ ຄືກັນ ແມ່ນແຕ່ຜູ້ທີ່ຫາກໍແຕ່ງງານກໍໃຫ້ອອກມາດ້ວຍ. ປະໂຣຫິດຜູ້ຮັບໃຊ້ອົງພຣະຜູ້ເປັນເຈົ້າກໍໃຫ້ມາ ຄືກັນ ລະຫວ່າງແທ່ນບູຊາ ແລະ ທາງເຂົ້າພຣະວິຫານນັ້ນ ຕ້ອງພາກັນຮ້ອງໄຫ້ ແລະ ພາວັນນາ ອະທິຖານ.” “ຈົ່ງກັບໃຈໃໝ່ຢ່າງແທ້ຈິງສາເຖີດ ແລະ ຈົ່ງກັບຄືນມາຫາເຮົາຢ່າງເຕັມໃຈ ດ້ວຍ ການອົດອາຫານ ແລະ ຮ້ອງໄຫ້ໄວ້ທຸກ. ຈົ່ງຈີກຫົວໃຈຂອງເຈົ້າ ບໍ່ແມ່ນຈີກເສື້ອຜ້າຂອງເຈົ້າ; ຈົ່ງ ຫັນກັບມາຫາພຣະເຢໂຮວາ ພຣະເຈົ້າຂອງເຈົ້າທັງຫຼາຍ, ເພາະວ່າພຣະອົງຊົງພຣະກະລຸນາ, ຊົ່ງໂກດ

ຊ້າ ແລະ ບໍຣິບູນດ້ວຍຄວາມເມດຕາ.” (ໂຢເອນ 2:1 ແປຈາກສະບັບ KJV, 15–17, 12, 13 ດັດແປງ ຈາກສະບັບ TKJV). {GC 311.1}

ຕ້ອງມີການປະຕິຮູບຄັ້ງໃຫຍ່ ເພື່ອກຽມຄົນໃຫ້ພ້ອມທີ່ຈະຢືນຢູ່ໃນວັນສຳຄັນຂອງພຣະເຈົ້າ. ພຣະເຈົ້າ ຊົງເຫັນວ່າ ຄົນຈຳນວນຫຼວງຫຼາຍອ້າງວ່າເປັນໄພ່ພົນຂອງພຣະອົງ ແຕ່ບໍ່ໄດ້ເສີມສ້າງອຸປະນິໄສເພື່ອ ຊີວິດນິຣັນ; ສະນັ້ນ, ດ້ວຍພຣະເມດຕາຂອງພຣະອົງ ພຣະອົງຊົງກຽມທີ່ຈະສົ່ງຂ່າວເຕືອນ ເພື່ອປຸກ ພວກເຂົາໃຫ້ຕື່ນຈາກຄວາມງ່ວງຊຶມ ແລະ ເພື່ອນຳພາພວກເຂົາໃຫ້ກຽມພ້ອມສຳລັບການສະເດັດມາ ຂອງພຣະອົງ. {GC 311.2}

ຄຳເຕືອນນີ້ຖືກບັນທຶກໄວ້ໃນພຣະທຳພຣະນິມິດ ບົດທີ 14, ເຊິ່ງອະທິບາຍວ່າ ຂ່າວນີ້ແບ່ງອອກເປັນ ສາມສ່ວນ ໂດຍມີທູດສະຫວັນເປັນຜູ້ປະກາດ ແລະ ທັນທີທີ່ການປະກາດນັ້ນຈົບລົງ ບຸດມະນຸດກໍຈະ ສະເດັດມາ ເພື່ອເກັບກ່ຽວຜົນຂອງແຜ່ນດິນໂລກ (ເບິ່ງ ພຣະນິມິດ 14:15). ຄຳເຕືອນຄັ້ງທຳອິດປະກາດ ວ່າ ເວລາແຫ່ງການພິພາກສາໃກ້ຈະມາເຖິງ. ຜູ້ເຜີຍພຣະທຳເຫັນທູດສະຫວັນ “ບິນໄປໃນທ້ອງຟ້າ, ມີ ຂ່າວປະເສີດອັນນິຣັນດອນ ນຳໄປປະກາດແກ່ຊາວໂລກທັ້ງປວງ, ແກ່ທຸກປະເທດ, ທຸກຊົນເຜົ່າ, ທຸກ ພາສາ ແລະ ທຸກຊົນຊາດ. ເທວະດາຕົນນັ້ນເປັ່ງສຽງຮ້ອງວ່າ, ‘ຈົ່ງຢຳເກງພຣະເຈົ້າ ແລະ ຍົກຍ້ອງ ໃຫ້ກຽດແກ່ພຣະອົງ ເພາະເຖິງເວລາແລ້ວ ທີ່ພຣະອົງຈະຕັດສິນມະນຸດສະໂລກ. ຈົ່ງນະມັດສະການ ພຣະອົງ ຜູ້ທີ່ໄດ້ສ້າງຟ້າສະຫວັນ, ແຜ່ນດິນໂລກ, ນ້ຳທະເລ ກັບບໍ່ນ້ຳພຸທັ້ງຫຼາຍ.’” (ພຣະນິມິດ 14:6, 7). {GC 311.3}

ຊົງມອບການປະກາດໄວ້ໃນມືຄົນທຳມະດາ

ພຣະຄຳພີກ່າວວ່າ ຂ່າວສານນີ້ເປັນສ່ວນໜຶ່ງຂອງ “ຂ່າວປະເສີດອັນນິຣັນດອນ.” ວຽກງານຂອງ ການປະກາດຂ່າວປະເສີດ ບໍ່ໄດ້ຖືກມອບໝາຍໃຫ້ແກ່ພວກທູດສະຫວັນ, ແຕ່ຖືກມອບໃຫ້ມະນຸດ. ທູດສະຫວັນບໍຣິສຸດໄດ້ຮັບມອບໝາຍໃຫ້ຊີ້ນຳວຽກງານນີ້; ພວກເຂົາມີໜ້າທີ່ຮັບຜິດຊອບໃນການເຄື່ອນ ໄຫວສຳຄັນເພື່ອຄວາມລອດຂອງມະນຸດ; ແຕ່ຜູ້ທີ່ເຮັດການປະກາດນັ້ນ ແມ່ນມະນຸດຜູ້ຮັບໃຊ້ຂອງ ພຣະຄຣິສເທິງແຜ່ນດິນໂລກ. {GC 312.1}

ຜູ້ທີ່ສັດຊື່ ແລະ ເຊື່ອຟັງຕາມການດົນໃຈຂອງພຣະວິນຍານຂອງພຣະເຈົ້າ ແລະ ເຮັດຕາມ ຄຳສອນໃນພຣະຄຳຂອງພຣະອົງ ຕ້ອງປະກາດເຕືອນໃຫ້ຊາວໂລກຮູ້. ພວກເຂົາເປັນຄົນທີ່ເອົາໃຈໃສ່ ຕໍ່ “ຄຳພະຍາກອນທີ່ແນ່ນອນ” ຄື “ແສງປະທີບທີ່ສ່ອງສະຫວ່າງໃນທີ່ມືດ ຈົນກວ່າແສງອາລຸນຈະ ຂຶ້ນ ແລະ ດາວປະຈຳຮຸ່ງຈະຜຸດຂຶ້ນໃນໃຈຂອງທ່ານທັ້ງຫຼາຍ.” (2 ເປໂຕ 1:19 TKJV). ຄົນເຫຼົ່ານີ້ ໄດ້ສະແຫວງຫາຄວາມຮູ້ກ່ຽວກັບພຣະເຈົ້າຫຼາຍກວ່າຊັບສົມບັດທີ່ເຊື່ອງໄວ້ທັງໝົດ ໂດຍຖືວ່າການຮູ້ຈັກ ພຣະອົງນັ້ນ “ດີກວ່າເງິນທີ່ໄດ້ຈາກເງິນ ແລະ [ໃຫ້] ກຳໄລ . . . ດີກວ່າຄຳ.” (ສຸພາສິດ 3:14). ແລ້ວ ພຣະເຈົ້າຊົງສຳແດງໃຫ້ພວກເຂົາເຫັນສິ່ງທີ່ຍິ່ງໃຫຍ່ແຫ່ງອານາຈັກຂອງພຣະອົງ. “ຄວາມລີ້ລັບຂອງ ພຣະເຢໂຮວາມີຢູ່ແກ່ຄົນທີ່ຢຳເກງພຣະອົງ ແລະ ພຣະອົງຈະຊົງແຈ້ງພັນທະສັນຍາຂອງພຣະອົງແກ່ ພວກເຂົາ.” (ເພງສັນລະເສີນ 25:14 ດັດແປງຈາກສະບັບ TKJV). {GC 312.2}

ນັກສາສະໜາສາດທີ່ຮຽນສູງ ກໍບໍ່ໄດ້ເຂົ້າໃຈຄວາມຈິງນີ້ ແລະ ບໍ່ໄດ້ຮ່ວມໃນການປະກາດ. ຖ້າຫາກ ວ່າພວກເຂົາເປັນຜູ້ເຝົ້າຍາມທີ່ສັດຊື່ ແລະ ໄດ້ຄົ້ນຄວ້າພຣະຄຳພີດ້ວຍຄວາມກະຕືລືລົ້ນ ແລະ ການ ອະທິຖານ, ພວກເຂົາກໍຈະຮູ້ວ່າຄ່ຳຄືນນັ້ນຮອດຈັກໂມງແລ້ວ; ພວກເຂົາກໍຈະເຂົ້າໃຈຄຳພະຍາກອນ ແລະ ຈະຮູ້ເຖິງເຫດການຕ່າງ ໆ ທີ່ໃກ້ຈະເກີດຂຶ້ນ. ແຕ່ພວກເຂົາບໍ່ໄດ້ເຮັດຢ່າງນັ້ນ, ຂ່າວສານຂອງພຣະເຈົ້າ ຈຶ່ງຖືກມອບໝາຍໃຫ້ຄົນທີ່ມີຖານະຕ່ຳຕ້ອຍກວ່າ. ພຣະເຢຊູຊົງກ່າວວ່າ: “ເມື່ອຍັງມີຄວາມສະຫວ່າງ

ຢູ່ ກໍຈົ່ງຍ່າງໄປເທາະ ເພາະຢ້ານວ່າ ຄວາມມືດຈະຕາມມາທັນພວກເຈົ້າ.” (ໂຢຮັນ 12:35). ຜູ້ທີ່ຫັນໜີຈາກຄວາມສະຫວ່າງທີ່ພຣະເຈົ້າຊົງມອບໃຫ້ ແລະ ຜູ້ທີ່ບໍ່ເອົາໃຈໃສ່ທີ່ຈະສະແຫວງຫາຄວາມສະຫວ່າງເມື່ອມັນຢູ່ໃກ້ ກໍຈະຖືກປະໄວ້ໃນຄວາມມືດ. ແຕ່ພຣະຜູ້ຊ່ວຍໃຫ້ລອດຊົງກ່າວວ່າ: “ຜູ້ທີ່ຕາມເຮົາມາຈະມີຄວາມສະຫວ່າງແຫ່ງຊີວິດ ແລະ ຈະບໍ່ເດີນຢູ່ໃນຄວາມມືດຈັກເທື່ອ.” (ໂຢຮັນ 8:12). ຜູ້ໃດກໍຕາມທີ່ພະຍາຍາມເຮັດຕາມນ້ຳພຣະໄທຂອງພຣະເຈົ້າດ້ວຍຈິດໃຈທີ່ແນ່ວແນ່ ແລະ ປະຕິບັດຕາມແສງສະຫວ່າງທີ່ຕົນໄດ້ຮັບແລ້ວດ້ວຍຄວາມກະຕືລືລົ້ນ, ຜູ້ນັ້ນກໍຈະໄດ້ຮັບຄວາມສະຫວ່າງເພີ່ມ. ພຣະເຈົ້າຈະສ່ອງສະຫວ່າງໃຫ້ຜູ້ນັ້ນ ເພື່ອນຳເຂົາໄປເຖິງຄວາມຈິງທັງມວນ. {GC 312.3}

ຜູ້ທີ່ເຝົ້າລໍຄອຍຈະໄດ້ຮັບພຣະພອນ

ເມື່ອພຣະຄຣິສສະເດັດມາຄັ້ງທຳອິດ ພວກປະໂຣຫິດ ແລະ ພວກທຳມະຈານໃນນະຄອນເຢຣູຊາເລັມເປັນຜູ້ທີ່ໄດ້ຮັບມອບໝາຍຈາກພຣະເຈົ້າ ໃຫ້ຮັກສາພຣະຄຳຂອງພຣະອົງ; ພວກເຂົາມີໂອກາດຮັບຮູ້ເຖິງໝາຍສຳຄັນຕ່າງ ໆ ທີ່ບົ່ງບອກເຖິງການສະເດັດມາຂອງພຣະຜູ້ຊ່ວຍໃຫ້ລອດ ຕາມທີ່ມີພຣະສັນຍາຂຽນໄວ້ໃນພຣະຄຳພີ; ແຕ່ພວກເຂົາບໍ່ໄດ້ສັງເກດໝາຍສຳຄັນເຫຼົ່ານັ້ນ ແລະ ບໍ່ໄດ້ເຂົ້າຮ່ວມໃນການປະກາດເລື່ອງການສະເດັດມາບັງເກີດຂອງພຣະຄຣິສ. ຄຳພະຍາກອນຂອງ ທ່ານ ມີກາ ໄດ້ລະບຸບ່ອນກຳເນີດຂອງພຣະອົງ ແລະ ດານີເອນໄດ້ບອກເວລາທີ່ພຣະອົງຈະບັງເກີດ. (ເບິ່ງ ມີກາ 5:2; ດານີເອນ 9:25). ພຣະເຈົ້າຊົງມອບໝາຍຄຳພະຍາກອນເຫຼົ່ານີ້ໃຫ້ແກ່ພວກຜູ້ນຳຊາວຢິວ; ສະນັ້ນ, ຈຶ່ງບໍ່ມີຂໍ້ແກ້ຕົວທີ່ພວກເຂົາບໍ່ຮູ້ ແລະ ບໍ່ໄດ້ປະກາດໃຫ້ຄົນທັງຫຼາຍຮັບຊາບວ່າ ພຣະເມຊີອາໃກ້ຈະສະເດັດມາໃນເວລານັ້ນ. ຄວາມບໍ່ຮູ້ຂອງພວກເຂົາ ເປັນຜົນຈາກຄວາມບາບທີ່ລະເລີຍບໍ່ເອົາໃຈໃສ່ຄຳພະຍາກອນ. ຊາວຢິວໃນເວລານັ້ນ ກຳລັງສ້າງອະນຸສາວະລີແກ່ພວກຜູ້ເຜີຍພຣະທຳທີ່ຖືກຂ້າຍ້ອນຄວາມເຊື່ອ; ແຕ່ໃນຂະນະດຽວກັນ, ພວກເຂົາພັດໃຫ້ຄວາມເຄົາລົບຕໍ່ບັນດາບຸກຄົນສຳຄັນຂອງໂລກ ເຊິ່ງເປັນການສະແດງຄວາມນັບຖືຕໍ່ຜູ້ຮັບໃຊ້ຂອງຊາຕານ. ພວກເຂົາມີຄວາມທະເຍີທະຍານ ແລະ ມົວແຕ່ຕໍ່ສູ້ແຍ່ງຊິງອຳນາດ ແລະ ຕຳແໜ່ງຝ່າຍໂລກ ຈົນລືມກຽດຕິຍົດທີ່ພຣະເຈົ້າແຫ່ງຟ້າສະຫວັນປະທານໃຫ້. {GC 313.1}

ພວກເຖົ້າແກ່ຂອງອິດສະຣາເອນຄວນໄດ້ເອົາໃຈໃສ່ ແລະ ສຶກສາຄົ້ນຄວ້າສະຖານທີ່, ເວລາ ແລະ ສະຖານະການທີ່ກ່ຽວຂ້ອງກັບເຫດການທີ່ຍິ່ງໃຫຍ່ທີ່ສຸດໃນປະຫວັດສາດໂລກ ຄືການສະເດັດມາຂອງພຣະບຸດຂອງພຣະເຈົ້າເພື່ອໄຖ່ມະນຸດໃຫ້ລອດພົ້ນ. ຄົນທັງຫຼາຍຄວນໄດ້ເຝົ້າເບິ່ງ ແລະ ລໍຖ້າເພື່ອຈະໄດ້ເປັນກຸ່ມຄົນທຳອິດທີ່ຈະຕ້ອນຮັບພຣະຜູ້ໄຖ່ຂອງໂລກ. ແຕ່ຢ່າງໃດກໍຕາມ, ໃນຂະນະນັ້ນ ໂຢເຊັບກັບນາງມາຣີໄດ້ເດີນທາງຢ່າງອ່ອນເພຍຈາກເນີນພູນາຊາເຣັດຈົນຮອດເມືອງເບັດເລເຮັມ. ພວກເຂົາເດີນຕະຫຼອດເສັ້ນທາງແຄບໃນເມືອງ ຈົນຮອດສຸດທາງດ້ານຕາເວັນອອກ ແຕ່ກໍຫາບໍ່ໄດ້ບ່ອນພັກແຮມໃນຄືນນັ້ນ; ບໍ່ມີຜູ້ໃດເປີດປະຕູຕ້ອນຮັບພວກເຂົາ. ໃນທີ່ສຸດພວກເຂົາພົບທີ່ພັກໃນກະຕູບອັນຕ່ຳຕ້ອຍທີ່ກຽມໄວ້ເພື່ອລ້ຽງງົວ, ແລ້ວພຣະຜູ້ຊ່ວຍໃຫ້ລອດຂອງໂລກຊົງຖືກຳເນີດຢູ່ທີ່ນັ້ນ. {GC 313.2}

ພວກທູດສະຫວັນເຄີຍໄດ້ເຫັນຣັດສະໝີພາບ ເຊິ່ງພຣະບຸດຂອງພຣະເຈົ້າຊົງມີຮ່ວມກັບພຣະບິດາກ່ອນໂລກນີ້ຈະຖືກສ້າງຂຶ້ນ; ພວກເພິ່ນຈຶ່ງລໍຄອຍການສະເດັດມາບັງເກີດເປັນມະນຸດຂອງພຣະອົງ ດ້ວຍຄວາມສົນໃຈຢ່າງແຮງກ້າ ພ້ອມກັບຖືວ່າເປັນເຫດການທີ່ໜ້າຍິນດີທີ່ສຸດສຳລັບມະນຸດທັງປວງ. ມີການມອບໝາຍໃຫ້ທູດສະຫວັນກຸ່ມໜຶ່ງ ໄປນຳຂ່າວອັນໜ້າຍິນດີນີ້ໃຫ້ແກ່ຜູ້ທີ່ກຽມພ້ອມທີ່ຈະຮັບເອົາ ຄືຜູ້ທີ່ຈະປະກາດຕໍ່ໃຫ້ຊາວໂລກຮູ້ດ້ວຍຄວາມໜ້າຊື່ນໃຈບານ. ພຣະຄຣິສຊົງຖ່ອມພຣະອົງລົງ ເພື່ອຮັບສະພາບຂອງມະນຸດ; ພຣະອົງຕ້ອງແບກຮັບເອົາຄວາມທຸກອັນບໍ່ມີຂອບເຂດ ໃນຂະນະທີ່ພຣະອົງຊົງມອບຊີວິດ

ເປັນເຄື່ອງບູຊາໄຖ່ບາບ; ເຖິງແມ່ນວ່າ ພຣະຄຣິສຊົງຖ່ອມພຣະອົງລົງ ແຕ່ຝ່າຍພວກທູດສະຫວັນ ກໍ ຢາກໃຫ້ພຣະອົງໄດ້ຮັບກຽດໃຫ້ສົມກັບຖານະພຣະບຸດຂອງອົງຜູ້ສູງສຸດ. ພວກບຸກຄົນສຳຄັນຂອງໂລກ ຈະເຕົ້າໂຮມກັນຢູ່ນະຄອນຫຼວງຂອງອິດສະຣາເອນເພື່ອຕ້ອນຮັບພຣະອົງບໍ? ພວກທູດສະຫວັນຈະໄດ້ມີ ໂອກາດແນະນຳພຣະຄຣິສແກ່ຄົນກຸ່ມໃຫຍ່ທີ່ລໍຖ້າພຣະອົງບໍ? {GC 313.3}

ມີທູດສະຫວັນອົງໜຶ່ງມາຢາມເບິ່ງວ່າ ມີໃຜແດ່ທີ່ກຽມພ້ອມທີ່ຈະຕ້ອນຮັບພຣະເຢຊູ. ແຕ່ທູດອົງນັ້ນບໍ່ ເຫັນອີ່ແອວ່າ ຈະມີຜູ້ໃດເຝົ້າລໍຖ້າການສະເດັດມາ. ບໍ່ໄດ້ຍິນສຽງສັນລະເສີນ ຫຼື ການຮ້ອງໂຮ່ອວຍໄຊ ວ່າ ການສະເດັດມາຂອງພຣະເມຊີອາໃກ້ຈະມາເຖິງແລ້ວ. ທູດສະຫວັນອົງນັ້ນບິນວົນວຽນຢູ່ເໜືອນະຄອນ ທີ່ພຣະເຈົ້າຊົງເລືອກໄວ້ ແລະ ເໜືອພຣະວິຫານ ອັນເປັນບ່ອນທີ່ພຣະເຈົ້າຊົງໃຫ້ຣັດສະໝີພາບແຫ່ງການ ສະຖິດຢູ່ຂອງພຣະອົງປາກົດຢູ່ເປັນເວລາຕໍ່ເນື່ອງກັນຫຼາຍຍຸກສະໄໝ, ແຕ່ທູດອົງນັ້ນພັດເຫັນແຕ່ຄົນທີ່ບໍ່ ເອົາໃຈໃສ່. ພວກປະໂຣຫິດທີ່ຫຍິ່ງທະນົງຕົວ ກຳລັງເຮັດພິທີກຳຢ່າງອະລັງການ ແຕ່ເປັນການຖວາຍ ບູຊາທີ່ເປີເປື້ອນມົນທິນບາບ. ພວກຟາຣີຊາຍກຳລັງສອນປະຊາຊົນດ້ວຍສຽງດັງ ຫຼື ບາງຄົນກຳລັງຍືນ ອະທິຖານຢູ່ປາກຊອຍດ້ວຍທ່າທີທີ່ໂອ້ອວດ. ບໍ່ວ່າຈະຢູ່ໃນພຣະຣາຊວັງຂອງກະສັດ, ໃນຫ້ອງປະຊຸມຂອງ ພວກນັກປັດຊະຍາ ຫຼື ຢູ່ໃນໂຮງຮຽນຂອງພວກຣັບບີ, ຕ່າງຄົນຕ່າງບໍ່ໄດ້ຮັບຮູ້ເຖິງຄວາມຈິງອັນປະເສີດທີ່ ເຮັດໃຫ້ສະຫວັນທັງໝົດມີຄວາມຊົມຊື່ນຍິນດີ ແລະ ການສັນລະເສີນ; ດ້ວຍວ່າ, ພຣະຜູ້ໄຖ່ຂອງມະນຸດ ກຳລັງຈະສະເດັດມາໃນໂລກໃຫ້ມະນຸດໄດ້ເຫັນ. {GC 314.1}

ບໍ່ມີຫຼັກຖານເລີຍວ່າ ມີຄົນຄາດຫວັງເຖິງການສະເດັດມາຂອງພຣະຄຣິສ; ບໍ່ມີການກຽມພ້ອມ ທີ່ຈະຕ້ອນຮັບອົງເຈົ້າຊີວິດ. ທູດສະຫວັນອົງນັ້ນປະຫຼາດໃຈ ແລະ ກຳລັງຈະກັບໄປສູ່ສະຫວັນດ້ວຍ ຂ່າວອັນໜ້າອັບອາຍນັ້ນ ແຕ່ກໍພົບເຫັນຄົນລ້ຽງແກະກຸ່ມໜຶ່ງທີ່ກຳລັງເຝົ້າເບິ່ງຝູງແກະຂອງຕົນໃນເວລາ ກາງຄືນ. ໃນຂະນະທີ່ພວກເຂົາເງີຍໜ້າເບິ່ງດວງດາວໃນທ້ອງຟ້າ, ພວກເຂົາໄຕ່ຕອງເຖິງຄຳພະຍາກອນ ເລື່ອງການສະເດັດມາຂອງພຣະເມຊີອາ ດ້ວຍຄວາມປາຖະໜາຢາກໃຫ້ພຣະຜູ້ໄຖ່ຂອງໂລກສະເດັດ ມາ. ນີ້ແມ່ນກຸ່ມຄົນທີ່ກຽມພ້ອມທີ່ຈະໄດ້ຮັບຟັງຂ່າວສານຈາກສະຫວັນ. ແລ້ວໃນທັນໃດນັ້ນເອງທູດ ຂອງອົງພຣະຜູ້ເປັນເຈົ້າກໍປາກົດຂຶ້ນ ແລະ ປະກາດຂ່າວດີເລື່ອງອັນໜ້າຊົມຊື່ນຍິນດີ. ສະຫງ່າຣາສີ ແຫ່ງສະຫວັນສ່ອງມາຍັງທົ່ງພຽງແຫ່ງນັ້ນ, ມີທູດສະຫວັນໝູ່ໃຫຍ່ຈົນນັບບໍ່ຖ້ວນປາກົດຂຶ້ນ ເໝືອນກັບ ວ່າ ຂ່າວອັນໜ້າຍິນດີດັ່ງກ່າວປະເສີດເກີນກວ່າທີ່ຈະໃຫ້ທູດສະຫວັນພຽງອົງດຽວປະກາດ. ທູດສະຫວັນ ໝູ່ໃຫຍ່ນັ້ນຈຶ່ງຮ່ວມກັນຮ້ອງເພງ ອັນເປັນເພງທີ່ມະນຸດທຸກຊາດທີ່ຈະໄດ້ຮັບຄວາມລອດຈະໄດ້ຮ້ອງກັນ ໃນທີ່ສຸດວ່າ: “ພຣະຣັດສະໝີຈົ່ງມີແດ່ພຣະເຈົ້າ ໃນສະຫວັນທີ່ສູງສຸດ ແລະ ທີ່ແຜ່ນດິນໂລກຈົ່ງມີ ສັນຕິສຸກ ແກ່ມະນຸດທັງປວງ.” (ລູກາ 2:14). {GC 314.2}

ເລື່ອງອັນປະເສີດລ້ຳຈາກເມືອງເບັດເລເຮັມນັ້ນ ມີບົດຮຽນທີ່ສຳຄັນແທ້ໜໍ! ເລື່ອງນັ້ນເປັນການຕຳໜິ ຄວາມບໍ່ເຊື່ອຖື, ຄວາມທະນົງຕົວ ແລະ ຄວາມເພິ່ງພາໃນຕົນເອງຂອງພວກເຮົາ. ມັນເຕືອນພວກເຮົາ ໃຫ້ລະວັງ, ຢ້ານວ່າໂດຍຄວາມບໍ່ໃສ່ໃຈຂອງພວກເຮົາ ເຊິ່ງເປັນຄວາມຜິດອັນຮ້າຍແຮງ ພວກເຮົາຈະ ບໍ່ສັງເກດໝາຍສຳຄັນຕ່າງ ໆ ທີ່ບົ່ງບອກເຖິງຍຸກສະໄໝ ເຊິ່ງຈະເປັນເຫດໃຫ້ພວກເຮົາບໍ່ຮູ້ວັນເວລາທີ່ ພຣະອົງຈະສະເດັດກັບມາ. {GC 315.1}

ແຕ່ພວກຜູ້ລ້ຽງແກະເທິງເນີນພູແຫ່ງແຂວງຢູດາຍ ບໍ່ແມ່ນກຸ່ມດຽວທີ່ພວກທູດສະຫວັນພົບວ່າກຳລັງ ເຝົ້າລໍຄອຍການສະເດັດມາຂອງພຣະເມຊີອາ. ໃນຕ່າງປະເທດມີຄົນທີ່ກຳລັງລໍຖ້າພຣະອົງ ຄືກຸ່ມນັກ ປັດຊະຍາຈາກທິດຕາເວັນອອກຜູ້ຮັ່ງມີ ແລະ ສະຫງ່າຜ່າເຜີຍ. ນັກປັດຊະຍາເຫຼົ່ານີ້ ເປັນພວກທີ່ ສຶກສາຄົ້ນຄວ້າທຳມະຊາດ ແລະ ໄດ້ເຫັນຝີພຣະຫັດຂອງພຣະເຈົ້າຜ່ານສິ່ງທີ່ພຣະອົງຊົງສ້າງ. ຈາກ

ພຣະຄຳພີພາສາເຮັບເຣີ ພວກເຂົາໄດ້ຮຽນຮູ້ເຖິງດວງດາວທີ່ຈະອອກມາຈາກຢາໂຄບ; ສະນັ້ນ, ພວກເຂົາຈຶ່ງເຝົ້າລໍຄ້ອຍການສະເດັດມາຂອງພຣະອົງ ເພາະພຣະອົງຈະບໍ່ພຽງແຕ່ເປັນ “ຜູ້ທີ່ມາໂຜດຊ່ວຍຊາດອິດສະຣາເອນໃຫ້ພົ້ນ” ເທົ່ານັ້ນ ແຕ່ຍັງເປັນ “ແສງສະຫວ່າງສ່ອງແຈ້ງເປີດເຜີຍພຣະປະສົງແກ່ບັນດາປະຊາຊາດ” ແລະ “ເປັນເຫດໃຫ້ໂລກທັງໝົດໄດ້ພົ້ນ.” (ລູກາ 2:25, 32; ກິດຈະການ 13:47). ພວກເຂົາເປັນຜູ້ສະແຫວງຫາຄວາມສະຫວ່າງ, ແລ້ວແສງສະຫວ່າງຈາກບັນລັງຂອງພຣະເຈົ້າໄດ້ສ່ອງມາຍັງທາງເດີນຂອງພວກເຂົາ. ພວກປະໂຣຫິດ ແລະ ພວກຮັບບີໃນເຢຣູຊາເລັມໄດ້ຮັບມອບໝາຍໃຫ້ຮັກສາ ແລະ ອະທິບາຍຫຼັກຄວາມຈິງ; ແຕ່ໃນຂະນະທີ່ພວກເຂົາຖືກຄວາມມືດຄອບງຳ ມີດວງດາວຈາກສະຫວັນນຳພາກຸ່ມຄົນຕ່າງຊາດດັ່ງກ່າວ ໃຫ້ໄປເຖິງສະຖານທີ່ອັນເປັນບ່ອນທີ່ພຣະຣາຊານ້ອຍຊົງບັງເກີດ. *{GC 315.2}*

ພຣະຄຣິສຈະສະເດັດ “ມາປາກົດເທື່ອທີສອງ ໂດຍບໍ່ກ່ຽວກັບຄວາມບາບ ແຕ່ເພື່ອໂຜດຊ່ວຍເອົາບັນດາຜູ້ທີ່ລໍຄອຍພຣະອົງດ້ວຍໃຈຮ້ອນຮົນ ໃຫ້ໄດ້ຮັບຄວາມພົ້ນ.” (ເຮັບເຣີ 9:28). ເຊັ່ນດຽວກັບຂ່າວການກຳເນີດຂອງພຣະຜູ້ຊ່ວຍໃຫ້ລອດ, ຂ່າວເລື່ອງການສະເດັດກັບມາຂອງພຣະອົງ ກໍບໍ່ໄດ້ຖືກມອບໝາຍໃຫ້ພວກຜູ້ນຳສາສະໜາ. ພວກເຂົາບໍ່ໄດ້ຮັກສາຄວາມສຳພັນຂອງຕົນກັບພຣະເຈົ້າ ແລະ ໄດ້ປະຕິເສດແສງສະຫວ່າງຈາກສະຫວັນ; ດັ່ງນັ້ນພວກເຂົາຈຶ່ງບໍ່ໄດ້ຢູ່ໃນຈຳນວນຄົນທີ່ອັກຄະສາວົກໂປໂລກ່າວເຖິງ ເມື່ອເພິ່ນກ່າວວ່າ: “ແຕ່ພີ່ນ້ອງທັງຫຼາຍເອີຍ ພວກເຈົ້າບໍ່ໄດ້ຢູ່ໃນຄວາມມືດແລ້ວ ແລະ ວັນນັ້ນຄົງຈະບໍ່ມາຫຼອນໃສ່ພວກເຈົ້າດັ່ງຂະໂມຍມາ. ເພາະວ່າ ພວກເຈົ້າທຸກຄົນເປັນລູກຂອງຄວາມສະຫວ່າງ ເປັນລູກຂອງກາງເວັນ ພວກເຮົາບໍ່ເປັນຝ່າຍກາງຄືນ ຫຼື ຝ່າຍຄວາມມືດ.” (1 ເທສະໂລນີກ 5:4, 5). *{GC 315.3}*

ພວກເຝົ້າຍາມເທິງກຳແພງເມືອງຊີໂອນ ຄວນເປັນກຸ່ມຄົນທຳອິດທີ່ຮັບເອົາຂ່າວເລື່ອງການສະເດັດກັບມາຂອງພຣະຜູ້ຊ່ວຍໃຫ້ລອດ ແລະ ຄວນເປັນກຸ່ມຄົນທຳອິດທີ່ປ່າວປະກາດວ່າ ເວລາທີ່ພຣະອົງຈະສະເດັດກັບມານັ້ນໃກ້ເຂົ້າມາແລ້ວ ແລະ ຄວນເປັນກຸ່ມຄົນທຳອິດທີ່ເຕືອນປະຊາຊົນໃຫ້ກຽມພ້ອມເພື່ອຕ້ອນຮັບການສະເດັດ. ແຕ່ພວກເຂົາຢູ່ຢ່າງສະດວກສະບາຍ ແລະ ເຝົ້າຝັນເຖິງການຢູ່ເຢັນເປັນສຸກ, ໃນຂະນະທີ່ປະຊາຊົນຫຼັບໄຫຼຢູ່ໃນຄວາມບາບ. ພຣະເຢຊູຊົງເຫັນສະພາບຂອງຄຣິສຕະຈັກຂອງພຣະອົງ ເໝືອນກັບຕົ້ນໝາກເດື່ອທີ່ເຕັມໄປດ້ວຍໃບໄມ້ແຕ່ບໍ່ມີໝາກຜົນ. ມີການປະຕິບັດຕາມພິທີທາງສາສະໜາຢ່າງອວດອົ່ງ, ແຕ່ຂາດສິ່ງດຽວທີ່ຈະເຮັດໃຫ້ພິທີເຫຼົ່ານັ້ນເປັນທີ່ຍອມຮັບຂອງພຣະເຈົ້າ ຄືຄວາມນອບນ້ອມຖ່ອມຕົນ, ການກັບໃຈ ແລະ ຄວາມເຊື່ອ. ແທນທີ່ຈະມີຜົນແຫ່ງພຣະວິນຍານ ພວກເຂົາພັດມີຄວາມຫຍິ່ງທະນົງຕົວ, ການເນັ້ນພິທີກຳ, ການຫຼົງຕົວເອງ, ຄວາມເຫັນແກ່ຕົວ ແລະ ການບີບບັງຄັບ. ຄຣິສຕະຈັກທີ່ຫຼົງໄປຈາກຄວາມເຊື່ອ ໄດ້ຫຼັບຫູຫຼັບຕາຕໍ່ໝາຍສຳຄັນຕ່າງ ໆ ທີ່ບົ່ງບອກເຖິງຍຸກສະໄໝ. ພຣະເຈົ້າບໍ່ໄດ້ປະຖິ້ມພວກເຂົາ, ຄວາມສັດຊື່ຂອງພຣະອົງບໍ່ໄດ້ລົ້ມເຫຼວ, ແຕ່ພວກເຂົາໄດ້ໜີຈາກພຣະອົງ ແລະ ແຍກຕົວເອງອອກຈາກຄວາມຮັກຂອງພຣະອົງ. ເມື່ອພວກເຂົາບໍ່ຍອມປະຕິບັດຕາມເງື່ອນໄຂ, ພຣະສັນຍາຕ່າງ ໆ ຂອງພຣະອົງກໍບໍ່ໄດ້ສຳເລັດໃຫ້ແກ່ພວກເຂົາ. *{GC 315.4}*

ທີ່ກ່າວມາແລ້ວຂ້າງເທິງ ແມ່ນຜົນທີ່ຈະເກີດຂຶ້ນຢ່າງແນ່ນອນ ເມື່ອຜູ້ຄົນບໍ່ຍອມເຫັນຄຸນຄ່າຂອງແສງສະຫວ່າງທີ່ພຣະເຈົ້າປະທານໃຫ້ ແລະ ບໍ່ນຳເອົາພຣະພອນຂອງພຣະເຈົ້າໄປໃຊ້ປະໂຫຍດ. ຖ້າຄຣິສຕະຈັກບໍ່ດຳເນີນຕາມການຊົງນຳຂອງພຣະອົງ ພ້ອມທັງຮັບເອົາແສງສະຫວ່າງທັງໝົດ ແລະ ເຮັດຕາມໜ້າທີ່ທຸກຢ່າງທີ່ພຣະອົງຊົງເປີດເຜີຍໃຫ້ນັ້ນ, ການນັບຖືສາສະໜາກໍຈະເສື່ອມລົງ ຈົນເຫຼືອແຕ່ການເຮັດຕາມພິທີກຳ ແລະ ຈະບໍ່ມີຜູ້ໃດທີ່ມີຈິດວິນຍານຕິດສະໜິດກັບພຣະເຈົ້າເຫຼືອຢູ່. ຄວາມຈິງນີ້ໄດ້ປາກົດໃຫ້ເຫັນຊ້ຳແລ້ວຊ້ຳອີກໃນປະຫວັດສາດຂອງຄຣິສຕະຈັກ. ພຣະເຈົ້າຊົງຮຽກຮ້ອງໃຫ້ໄພ່ພົນຂອງ

ພຣະອົງສະແດງເຖິງຄວາມເຊື່ອດ້ວຍການກະທຳ ແລະ ການປະຕິບັດຕາມຄຳສອນຂອງພຣະອົງ, ເຊິ່ງ ສິ່ງເຫຼົ່ານີ້ຄວນສອດຄ່ອງກັບພຣະພອນ ແລະ ສິດທິພິເສດທັງໝົດທີ່ພຣະອົງຊົງປະທານໃຫ້. ການທີ່ຈະ ເຊື່ອຟັງໄດ້ນັ້ນ ກໍຕ້ອງອາໄສການເສຍສະຫຼະ ແລະ ການແບກໄມ້ກາງແຂນ; ເພາະເຫດນີ້, ຫຼາຍຄົນທີ່ ອ້າງຕົນເປັນສາວົກຂອງພຣະຄຣິສ ຈຶ່ງປະຕິເສດທີ່ຈະຮັບແສງສະຫວ່າງຈາກສະຫວັນ ແລະ ເໝືອນກັບ ຊາວຢິວໃນສະໄໝບູຮານ ເຂົາທັງຫຼາຍບໍ່ຮູ້ເວລາທີ່ພຣະເຈົ້າສະເດັດມາຢ້ຽມຢາມພວກເຂົາ. (ເບິ່ງ ລູກາ 19:44). ເນື່ອງຈາກຄວາມທະນົງຕົວ ແລະ ຄວາມບໍ່ເຊື່ອຂອງພວກເຂົາ, ພຣະຜູ້ເປັນເຈົ້າຈຶ່ງຜ່ານ ພວກເຂົາໄປ ແລະ ໄດ້ເປີດເຜີຍຄວາມຈິງຂອງພຣະອົງແກ່ຜູ້ທີ່ມີລັກສະນະເໝືອນຜູ້ລ້ຽງແກະແຫ່ງເມືອງ ເບັດເລເຮັມ ແລະ ພວກນັກປັດຊະຍາຈາກທິດຕາເວັນອອກ ທີ່ເອົາໃຈໃສ່ ແລະ ດຳເນີນຕາມແສງ ສະຫວ່າງທັງໝົດທີ່ມີຢູ່. *{GC 316.1}*



ມິນເລີພະຍາຍາມປະຖິ້ມຄວາມຄິດເຫັນສ່ວນຕົວທັງໝົດ ແລະ ໜັງສືອະທິບາຍ
ພຣະຄຳພີ ແລ້ວກຳປຽບທຽບຂໍ້ພຣະຄຳພີທີ່ກ່ຽວຂ້ອງກັນ ໂດຍອາໄສຂໍ້
ອ້າງອີງທີ່ພິມໄວ້ຂ້າງຂໍ້ພຣະຄຳພີ ແລະ ໜັງສືດັດຊະນີຄຳສັບພຣະຄຳພີ.

ເບິ່ງໜ້າ 255.

Image generated with AI (Google Gemini).

18

ນັກປະຕິຮູບ ຊາວ ອາເມຣິກາ

ວິນລຽມ ມິນເລີ

ຜູ້ທີ່ພຣະເຈົ້າຊົງເລືອກໄວ້ເປັນພິເສດ ໃຫ້ປະກາດເລື່ອງການສະເດັດມາຄັ້ງທີສອງຂອງພຣະຄຣິສ ເປັນ ຊາວໄຮ່ຊາວນາທີ່ສັດຊື່ຄົນໜຶ່ງ. ເພິ່ນເຄີຍສົງໄສວ່າພຣະຄຳພີມາຈາກພຣະເຈົ້າແທ້ຫຼືບໍ່; ແຕ່ເພິ່ນເປັນ ຄົນຈິງໃຈ ທີ່ຢາກຮູ້ຫຼັກຄວາມຈິງ. ວິນລຽມ ມິນເລີ ບໍ່ຕ່າງກັບນັກປະຕິຮູບຄົນອື່ນ ໆ ທີ່ຕ້ອງຕໍ່ສູ້ກັບ ຄວາມຍາກຈົນໃນຊ່ວງຊີວິດໄວເດັກ ຈຶ່ງໄດ້ຮຽນຮູ້ບົດຮຽນສຳຄັນຂອງຄວາມຖ່ຽມຖັ່ນ ແລະ ການປະຕິເສດ ຕົນເອງ. ສະມາຊິກຄອບຄົວຂອງເພິ່ນມີລັກສະນະເປັນຕົວຂອງຕົວເອງ ແລະ ຮັກເສລີພາບ, ມີຄວາມ ສາມາດ ແລະ ຄວາມອົດທົນສູງ ທັງເປັນຄົນຮັກຊາດຢ່າງແຮງກ້າ, ເຊິ່ງລັກສະນະເຫຼົ່ານີ້ກໍປາກົດ ຢູ່ໃນອຸປະນິໄສຂອງເພິ່ນ. ພໍ່ຂອງມິນເລີເປັນທະຫານຍົດຮ້ອຍເອກໃນສົງຄາມປະກາດເອກະລາດ, ເຊິ່ງ ການຕໍ່ສູ້ ແລະ ຄວາມທຸກຍາກຕ່າງ ໆ ໃນຍຸກສະໄໝທີ່ປັ່ນປ່ວນນັ້ນ ເປັນເຫດໃຫ້ຄອບຄົວຂອງມິນເລີມີ ຄວາມຂັດສົນໃນຊ່ວງໄວເດັກຂອງເພິ່ນ. *{GC 317.1}*

ມິນເລີເປັນຄົນແຂງແຮງ ແລະ ສະແດງເຖິງຄວາມສະຫຼຽວສະຫຼາດກວ່າຄົນທົ່ວໄປຕັ້ງແຕ່ຍັງເປັນ ເດັກນ້ອຍ. ເມື່ອເພິ່ນເຕີບໃຫຍ່ຂຶ້ນ ຄວາມສະຫຼາດນີ້ຍິ່ງປາກົດໃຫ້ເຫັນຢ່າງຊັດເຈນ. ສະໝອງຂອງມິນເລີ ໄດ້ຮັບການພັດທະນາເປັນຢ່າງດີ; ເພິ່ນເປັນຄົນຫົວໄວ ແລະ ກະຕາຍຫາຄວາມຮູ້. ເຖິງແມ່ນວ່າເພິ່ນບໍ່ ມີໂອກາດຮຽນໃນມະຫາວິທະຍາໄລ, ແຕ່ການມັກຮຽນ ແລະ ນິໄສຝຶກຄວາມຄິດໃຫ້ເປັນລະບຽບ ພ້ອມ ກັບການຮູ້ຈັກວິເຄາະຢ່າງລະອຽດ ເຮັດໃຫ້ເພິ່ນມີຄວາມຄິດເຫັນທີ່ຮອບຄອບ ແລະ ກວ້າງຂວາງຄົບ ຖ້ວນ. ໃນດ້ານສິນລະທຳນັ້ນເພິ່ນບໍ່ມີບ່ອນຕິ; ມີຊື່ສຽງທີ່ໜ້າອິດສາ ເພາະເປັນທີ່ຮູ້ຈັກກັນວ່າມິນເລີເປັນ ຄົນສັດຊື່, ຮູ້ຈັກປະຢັດ ແລະ ມີໃຈເມດຕາ. ໂດຍການດິ້ນຮົນເອົາໃຈໃສ່ ເພິ່ນສາມາດສ້າງເນື້ອສ້າງຕົວຂຶ້ນ ມາ ແຕ່ບໍ່ປະຖິ້ມການສຶກສາຄົ້ນຄວ້າ. ມິນເລີໄດ້ດຳລົງຕຳແໜ່ງຕ່າງ ໆ ທັງຝ່າຍພົນລະເມືອງ ແລະ ໃນ ກອງທັບຢ່າງເຕັມພາກພູມ, ເບິ່ງຄືວ່າຫົນທາງສູ່ຄວາມຮັ່ງມີ ແລະ ກຽດຕິຍົດສັກສີໄດ້ເປີດກວ້າງສຳລັບ ເພິ່ນ. *{GC 317.2}*

ແມ່ຂອງເພິ່ນເປັນຄົນທ່ຽງທຳ ມີສິນລະທຳດີງາມ, ແລະຕອນຍັງນ້ອຍມິນເລີຍັງໄດ້ຮັບການອົບຮົມໃນ ຄຳສອນຂອງສາສະໜາ. ແຕ່ເມື່ອເພິ່ນເຕີບໂຕເປັນຜູ້ໃຫຍ່ ເພິ່ນຕົກຢູ່ທ່າມກາງສັງຄົມຂອງພວກ “ດີອິສ” (Deist) ທີ່ເຊື່ອວ່າພຣະເຈົ້າບໍ່ມີສ່ວນກ່ຽວພັນກັບມະນຸດ; ອິດທິພົນຂອງກຸ່ມນີ້ມີນ້ຳໜັກ ຍ້ອນວ່າຄົນທີ່ ເຊື່ອຕາມລັດທິດັ່ງກ່າວ ສ່ວນຫຼາຍແມ່ນພົນລະເມືອງດີເດັ່ນ, ເປັນຄົນທີ່ມີມະນຸດສະທຳ ແລະ ມີຄວາມ ເມດຕາ. ແຕ່ເປັນເພາະຄົນເຫຼົ່ານີ້ຢູ່ທ່າມກາງສະຖາບັນຄຣິສຕຽນ, ອຸປະນິໄສຂອງພວກເຂົາຈຶ່ງໄດ້ຮັບການ ຫຼໍ່ຫຼອມຈາກສະພາບແວດລ້ອມທີ່ດີ. ຄຸນນະສົມບັດອັນດີທີ່ເຮັດໃຫ້ຄົນທັງຫຼາຍນັບໜ້າຖືຕານັ້ນ ລ້ວນແຕ່ ມາຈາກພຣະຄຳພີ, ແຕ່ຂອງປະທານທີ່ດີເຫຼົ່ານີ້ກັບຖືກບິດເບືອນ ຈົນພວກເຂົາມີອິດທິພົນໂນ້ມນ້າວຄົນ

ອື່ນໃຫ້ຫ່າງເຫີນຈາກພຣະຄຳຂອງພຣະເຈົ້າ. ເມື່ອມິນເລີຄົບຫາສຳມະຄົມກັບຄົນເຫຼົ່ານີ້ ເພິ່ນຈຶ່ງຮັບເອົາ ຄວາມຄິດເຫັນຂອງພວກເຂົາ. ການຕີຄວາມໝາຍຂອງພຣະຄຳພີໃນເວລານັ້ນ ມີຄວາມຫຍຸ້ງຍາກສັບສົນ ເກີນທີ່ເພິ່ນຈະຫາຄຳອະທິບາຍໄດ້, ແຕ່ຄວາມເຊື່ອໃໝ່ຂອງເພິ່ນຕາມລັດທິດີອິສທີ່ປະຖິ້ມພຣະຄຳພີ ກໍ ບໍ່ມີຄຳຕອບທີ່ດີກວ່ານັ້ນ; ເພິ່ນຈຶ່ງຮູ້ສຶກວ່າຍັງຕ້ອງການຄຳອະທິບາຍ. ເຖິງຢ່າງໃດກໍຕາມ, ເພິ່ນຍັງຄົງ ເຊື່ອຖືຕາມລັດທິດີອິສເປັນເວລາປະມານ 12 ປີ. ແຕ່ເມື່ອອາຍຸໄດ້ 34 ປີ ພຣະວິນຍານບໍຣິສຸດໄດ້ ດົນບັນດານໃຈໃຫ້ເພິ່ນສຳນຶກວ່າ ຕົນເປັນຄົນບາບ. ເພິ່ນຮູ້ສຶກວ່າ ຄວາມເຊື່ອຖືຂອງເພິ່ນບໍ່ສາມາດ ໃຫ້ຄວາມຫວັງຫຼັງຄວາມຕາຍ; ເມື່ອເບິ່ງໄປໃນອະນາຄົດ ເພິ່ນເຫັນແຕ່ຄວາມມືດມົວ ແລະ ຄວາມ ໂສກເສົ້າ. ຕໍ່ມາເພິ່ນກ່າວຍ້ອນຫຼັງເຖິງຄວາມຮູ້ສຶກຂອງຕົນໃນເວລານັ້ນວ່າ: *{GC 318.1}*

“ເມື່ອຄິດເຖິງການຕາຍດັບສູນກໍຮູ້ສຶກໝາວເຢັນ; ຖ້າມະນຸດຕ້ອງຖືກຄິດບັນຊີຫຼັງຄວາມຕາຍ ມະນຸດ ທຸກຄົນກໍຄົງຕ້ອງຈົບຫາຍໄປທັງໝົດຢ່າງແນ່ນອນ. ຂ້າພະເຈົ້າຮູ້ສຶກວ່າ ຟ້າສະຫວັນເບື້ອງເທິງເປັນດັ່ງ ທອງເຫຼືອງ ແລະ ແຜ່ນດິນໂລກເບື້ອງລຸ່ມເປັນດັ່ງເຫຼັກໃຕ້ຕີນ. ນິຣັນດອນແມ່ນຫຍັງ? ແລ້ວເປັນຫຍັງ ຈຶ່ງຕ້ອງມີຄວາມຕາຍ? ຂ້າພະເຈົ້າຍິ່ງຄິດ ກໍຍິ່ງຮູ້ສຶກວ່າຄຳຕອບຢູ່ຫ່າງໄກ, ຍິ່ງຄິດຫຼາຍເທົ່າໃດ ກໍ ຍິ່ງສັບສົນເທົ່ານັ້ນ. ຂ້າພະເຈົ້າຈຶ່ງພະຍາຍາມຢຸດຄິດ ແຕ່ຄວາມຄິດບໍ່ສາມາດຄວບຄຸມໄດ້. ຂ້າພະເຈົ້າ ຮູ້ສຶກໃຈເປັນທຸກເຫຼືອເກີນ ແຕ່ບໍ່ເຂົ້າໃຈສາເຫດ. ຂ້າພະເຈົ້າໄດ້ຈົ່ມພຶມພຳ ແຕ່ບໍ່ຮູ້ວ່າແມ່ນຈົ່ມໃຫ້ຜູ້ໃດ ຟັງ. ຂ້າພະເຈົ້າຮູ້ວ່າມີສິ່ງທີ່ເປັນຄວາມຜິດ, ແຕ່ບໍ່ຮູ້ວ່າຈະຫາຄວາມຖືກຕ້ອງຢູ່ໃສ ແລະ ຈະໄປຫາມັນ ໄດ້ຢ່າງໃດ. ຂ້າພະເຈົ້າໂສກເສົ້າໂດຍປາສະຈາກຄວາມຫວັງ.” *{GC 318.2}*

ມິນເລີພົບວ່າພຣະເຢຊູຊົງເປັນມິດສະຫາຍ

ມິນເລີຍັງຄົງຢູ່ໃນສະພາບນີ້ຕໍ່ໄປເປັນເວລາຫຼາຍເດືອນ. ເພິ່ນກ່າວຕື່ມວ່າ: “ຢູ່ມາວັນໜຶ່ງກໍມີຄວາມຄິດ ປາກົດຢູ່ໃນຫົວຢ່າງແຈ່ມແຈ້ງວ່າ ອາດມີພຣະຜູ້ຊ່ວຍໃຫ້ລອດ. ຂ້າພະເຈົ້າຮູ້ສຶກວ່າ ອາດເປັນໄປໄດ້ທີ່ຈະ ມີບຸກຄົນຜູ້ໜຶ່ງທີ່ມີຄຸນງາມຄວາມດີພຽງພໍທີ່ຈະຊົດໃຊ້ຄວາມຜິດບາບຂອງຄົນເຮົາ ແລະ ຊ່ວຍເຮົາ ໃຫ້ພົ້ນຈາກຄວາມທຸກ ແລະ ການລົງໂທດເພາະຄວາມບາບ. ຂ້າພະເຈົ້າຮູ້ສຶກທັນທີວ່າ ບຸກຄົນ ເຊັ່ນນັ້ນຕ້ອງແມ່ນຜູ້ທີ່ປະເສີດແທ້ໆ, ຈຶ່ງຈິນຕະນາການເຫັນຕົວເອງຟຸບຕົວລົງໃນອ້ອມກອດຂອງຜູ້ ນັ້ນ ແລະ ໄວ້ວາງໃຈໃນຄວາມເມດຕາຂອງເພິ່ນ. ແຕ່ມີຄຳຖາມເກີດຂຶ້ນວ່າ, ຈະພິສູດໄດ້ແນວໃດ ວ່າບຸກຄົນເຊັ່ນນັ້ນມີຈິງ? ນອກເໜືອຈາກພຣະຄຳພີແລ້ວ ຂ້າພະເຈົ້າບໍ່ພົບເຫັນວ່າ ມີຫຼັກຖານອື່ນ ທີ່ກ່າວເຖິງພຣະຜູ້ຊ່ວຍໃຫ້ລອດໃນລັກສະນະດັ່ງກ່າວ ຫຼື ທີ່ຢືນຢັນເຖິງສະພາບຂອງຄົນຫຼັງຄວາມ ຕາຍ. . . .” *{GC 319.1}*

“ຂ້າພະເຈົ້າເຫັນວ່າ ພຣະຄຳພີກ່າວເຖິງພຣະຜູ້ຊ່ວຍໃຫ້ລອດຢ່າງທີ່ຂ້າພະເຈົ້າຕ້ອງການ, ແຕ່ກໍຮູ້ສຶກ ງຸນງົງທີ່ໜັງສືເຊື່ອຂ້າພະເຈົ້າເຂົ້າໃຈວ່າ ບໍ່ໄດ້ຮັບການດົນໃຈຈາກສິ່ງທີ່ເໜືອທຳມະຊາດ ຈະສອນຫຼັກການ ທີ່ເໝາະສົມກັບມະນຸດສະໂລກທີ່ຕົກສູ່ຄວາມບາບໄດ້ແນວໃດ. ຂ້າພະເຈົ້າຈຶ່ງຈຳໃຈຍອມຮັບວ່າ ພຣະຄຳພີ ຕ້ອງເປັນການເປີດເຜີຍຈາກພຣະເຈົ້າ. ພຣະຄຳພີຈຶ່ງກາຍເປັນສິ່ງທີ່ຂ້າພະເຈົ້າຊົມຊື່ນຍິນດີທີ່ສຸດ ແລະ ຂ້າພະເຈົ້າໄດ້ພົບວ່າພຣະເຢຊູຄືມິດສະຫາຍຂອງຂ້າພະເຈົ້າ. ພຣະຜູ້ຊ່ວຍໃຫ້ລອດໄດ້ກາຍເປັນຜູ້ທີ່ສຳຄັນ ທີ່ສຸດທ່າມກາງຄົນນັບໝື່ນ ແລະ ພຣະຄຳພີເຊິ່ງແຕ່ກ່ອນນັ້ນເບິ່ງຄືມືດມົວ ແລະ ຂັດແຍ້ງກັນ, ບັດນີ້ ໄດ້ກາຍເປັນໂຄມໄຟສຳລັບທາງເດີນຂອງຂ້າພະເຈົ້າ; ຄວາມສັບສົນໃນໃຈກໍສະຫງົບລົງ ແລະ ຂ້າພະເຈົ້າ ກໍຮູ້ສຶກເພິ່ງພໍໃຈ; ຂ້າພະເຈົ້າພົບວ່າອົງພຣະຜູ້ເປັນເຈົ້າຊົງເປັນພຣະສີລາທ່າມກາງມະຫາສະໝຸດແຫ່ງ ຊີວິດ. ຕອນນີ້ພຣະຄຳພີໄດ້ກາຍເປັນສິ່ງທີ່ຂ້າພະເຈົ້າສຶກສາຫຼາຍທີ່ສຸດ ແລະ ຂ້າພະເຈົ້າສາມາດເວົ້າໄດ້ ເຕັມປາກວ່າ ຂ້າພະເຈົ້າໄດ້ຄົ້ນຄວ້າພຣະຄຳພີດ້ວຍຄວາມຊົມຊື່ນຍິນດີຫຼາຍ ແລະ ພົບວ່າ ແມ່ນແຕ່

ເຄິ່ງໜຶ່ງຂອງຄວາມຈິງ ກໍບໍ່ເຄີຍມີໃຜບອກຂ້າພະເຈົ້າ. ຂ້າພະເຈົ້າສົງໄສວ່າເປັນຫຍັງຈຶ່ງບໍ່ເຄີຍເຫັນຄວາມສວຍງາມຂອງພຣະຄຳພີມາກ່ອນ ແລະ ຮູ້ສຶກປະຫຼາດໃຈທີ່ຕົນເອງເຄີຍປະຕິເສດພຣະຄຳຂອງພຣະເຈົ້າ. ຂ້າພະເຈົ້າພົບເຫັນວ່າ ທຸກສິ່ງທີ່ຈິດໃຈຂອງຂ້າພະເຈົ້າສາມາດປາຖະໜາໄດ້ ກໍໄດ້ຮັບການເປີດເຜີຍໃນພຣະຄຳພີ, ໃນນັ້ນມີຢາບຳບັດໂຣຄາພະຍາດຝ່າຍຈິດວິນຍານທຸກຢ່າງ. ຂ້າພະເຈົ້າຮູ້ສຶກເປື່ອໜ່າຍທີ່ຈະອ່ານເລື່ອງອື່ນ ຈຶ່ງທຸ້ມເທຈິດໃຈໃນການສະແຫວງຫາສະຕິປັນຍາຈາກພຣະເຈົ້າ."[1] *{GC 319.2}*

ມິນເລີປະກາດຢ່າງເປີດເຜີຍເຖິງຄວາມເຊື່ອສັດທາຂອງເພິ່ນໃນສາສະໜາທີ່ເພິ່ນເຄີຍດູຖູກ. ແຕ່ຕໍ່ມາ ບໍ່ດົນເພື່ອນເກົ່າທີ່ບໍ່ເຊື່ອໃນພຣະເຈົ້າ ໄດ້ສະເໜີຂໍ້ໂຕ້ແຍ້ງດຽວກັນທີ່ເພິ່ນເອງເຄີຍໃຊ້ ໃນການຕໍ່ຕ້ານເລື່ອງທີ່ພຣະຄຳພີໄດ້ຮັບການດົນໃຈຈາກພຣະເຈົ້າ. ໃນເວລານັ້ນ ເພິ່ນຍັງບໍ່ພ້ອມທີ່ຈະຕອບພວກເຂົາ ແຕ່ກໍຄິດວ່າຖ້າພຣະຄຳພີເປັນສິ່ງທີ່ພຣະເຈົ້າຊົງເປີດເຜີຍແລ້ວ ພຣະຄຳພີກໍຕ້ອງມີຄວາມສອດຄ່ອງໃນຕົວຂອງມັນເອງ; ແລະເນື່ອງຈາກວ່າພຣະເຈົ້າປະທານມາເພື່ອສັ່ງສອນມະນຸດ, ສະນັ້ນ, ມະນຸດຕ້ອງສາມາດເຂົ້າໃຈພຣະຄຳພີໄດ້. ມິນເລີຈຶ່ງຕັດສິນໃຈສຶກສາພຣະຄຳພີດ້ວຍຕົວເອງ ເພື່ອຈະຮູ້ວ່າ ຂໍ້ຄວາມທີ່ເບິ່ງຄືຂັດແຍ້ງກັນນັ້ນ ສາມາດອະທິບາຍໃຫ້ສອດຄ່ອງກັນໄດ້ຫຼືບໍ່. *{GC 319.3}*

ມິນເລີພະຍາຍາມປະຖິ້ມຄວາມຄິດເຫັນສ່ວນຕົວທັງໝົດ ແລະ ໜັງສືອະທິບາຍພຣະຄຳພີ ແລ້ວກໍປຽບທຽບຂໍ້ພຣະຄຳພີທີ່ກ່ຽວຂ້ອງກັນ ໂດຍອາໄສຂໍ້ອ້າງອີງທີ່ພິມໄວ້ຂ້າງຂໍ້ພຣະຄຳພີ ແລະ ໜັງສືດັດຊະນີຄຳສັບພຣະຄຳພີ. ເພິ່ນສຶກສາເປັນປະຈຳຢ່າງເປັນລະບຽບ ໂດຍອ່ານເທື່ອລະຂໍ້ ເລີ່ມຈາກພຣະທຳປະຖົມມະການເປັນຕົ້ນໄປ ແລະ ບໍ່ໄປຕໍ່ຂໍ້ໃໝ່ຈົນກວ່າຈະໝັ້ນໃຈໃນຄວາມໝາຍຂອງຂໍ້ທີ່ກຳລັງສຶກສາ. ເມື່ອພົບສິ່ງໃດທີ່ບໍ່ເຂົ້າໃຈ, ເພິ່ນມັກຈະເອົາຂໍ້ນັ້ນປຽບທຽບກັບຂໍ້ອື່ນໆ ທຸກຂໍ້ທີ່ເບິ່ງຄືວ່າ ມີສ່ວນກ່ຽວຂ້ອງກັບເລື່ອງທີ່ຕົນກຳລັງພິຈາລະນາຢູ່. ເພິ່ນໃຫ້ທຸກຄຳໃນແຕ່ລະຂໍ້ມີນ້ຳໜັກຂອງມັນເອງ ແລະ ຖ້າຄວາມເຂົ້າໃຈຂອງເພິ່ນສອດຄ່ອງກັບພຣະຄຳພີທຸກຂໍ້ທີ່ກ່ຽວຂ້ອງ ກໍຖືວ່າເຂົ້າໃຈຂໍ້ນັ້ນແລ້ວ. ດັ່ງນັ້ນ, ເມື່ອໃດກໍຕາມທີ່ເພິ່ນພົບກັບຂໍ້ຄວາມທີ່ເຂົ້າໃຈຍາກ ເພິ່ນກໍພົບຄຳອະທິບາຍໃນພຣະຄຳພີຕອນອື່ນ. ໃນຂະນະທີ່ເພິ່ນສຶກສາດ້ວຍການອະທິຖານຢ່າງຮ້ອນຮົນ ຂໍໃຫ້ພຣະເຈົ້າຊົງໂຜດໃຫ້ເພິ່ນເຂົ້າໃຈ, ເລື່ອງເຊິ່ງກ່ອນໜ້ານັ້ນເບິ່ງຄືມືດມົວ ກໍມີຄວາມກະຈ່າງຂຶ້ນ. ເພິ່ນໄດ້ປະສົບກັບຄວາມຈິງໃນພຣະທຳເພງສັນລະເສີນທີ່ກ່າວວ່າ: "ການອະທິບາຍຂໍ້ຄຳສັ່ງສອນຂອງພຣະອົງໃຫ້ແສງສະຫວ່າງ ແລະ ນຳປັນຍາໃຫ້ແກ່ພວກຄົນໂງ່ຈ້າດ້ວຍ." (ເພງສັນລະເສີນ 119:130). *{GC 320.1}*

ມິນເລີສຶກສາພຣະທຳດານີເອນ ແລະ ພຣະນິມິດດ້ວຍຄວາມສົນໃຈຢ່າງແຮງກ້າ, ໂດຍໃຊ້ຫຼັກການຕີຄວາມໝາຍທີ່ເພິ່ນເຄີຍນຳໃຊ້ໃນການສຶກສາພຣະຄຳພີຕອນອື່ນ; ແລ້ວກໍມີຄວາມຊົມຊື່ນຍິນດີຫຼາຍເມື່ອພົບວ່າ ເພິ່ນສາມາດເຂົ້າໃຈສັນຍະລັກຕ່າງໆ ຂອງຄຳພະຍາກອນໄດ້. ເພິ່ນພົບວ່າ ຄຳພະຍາກອນທີ່ສຳເລັດແລ້ວ ກໍສຳເລັດຕາມຕົວອັກສອນໃນໂລກຄວາມເປັນຈິງ; ສ່ວນເງົາສັນຍະລັກ, ຮູບແບບ, ຄຳອຸປະມາ ແລະ ຄຳປຽບທຽບຕ່າງໆ ກໍມີຄຳອະທິບາຍຢູ່ໃນພຣະຄຳພີຕອນນັ້ນ ຫຼືວ່າຄຳສັບທີ່ໃຊ້ໃນຄຳປຽບທຽບນັ້ນ ກໍໄດ້ມີການນິຍາມໄວ້ໃນພຣະຄຳພີຕອນອື່ນ; ເມື່ອຕີຄວາມໝາຍຂອງຄຳສັບແລ້ວ ກໍຄວນເຂົ້າໃຈຕາມນັ້ນ. ເພິ່ນກ່າວວ່າ: "ດ້ວຍເຫດນີ້, ຂ້າພະເຈົ້າຈຶ່ງໝໍ້ໃຈວ່າ ພຣະຄຳພີເປັນລະບົບຄວາມຈິງທີ່ພຣະເຈົ້າຊົງເປີດເຜີຍ; ທຸກຢ່າງແຈ່ມແຈ້ງ ແລະ ເຂົ້າໃຈງ່າຍ, ຈົນແມ່ນແຕ່ຄົນໂງ່ຈ້າກໍຈະບໍ່ຫຼົງໃນທາງນັ້ນ."[2] ຂໍ້ຄວາມຈິງໄດ້ປາກົດດັ່ງສາຍໂສ້ທີ່ເຊື່ອມຕໍ່ກັນ ເປັນຜົນຕອບແທນຄວາມພະຍາຍາມ

[1] ເອັສ. ບຼິສ (S. Bliss), *ບົດບັນທຶກຂອງ ວິນລຽມ ມິນເລີ*, ໜ້າ 65–67.
[2] ບຼິສ, ໜ້າ 70.

ຂອງເພິ່ນ. ໃນຂະນະທີ່ເພິ່ນສຶກສາຄຳພະຍາກອນສຳຄັນທັງຫຼາຍໄປເທື່ອລະກ້າວ, ທູດສະຫວັນໄດ້ນຳ ຄວາມຄິດຂອງເພິ່ນ ແລະ ຊ່ວຍເປີດເຜີຍໃຫ້ເພິ່ນເຂົ້າໃຈພຣະຄຳພີ. {GC 320.2}

ມິນເລີ ຍົກ ເອົາ ວິທີ ທີ່ ຄຳພະຍາກອນ ສຳເລັດ ໃນ ອະດີດ ມາ ເປັນ ບັນທັດຖານ ໃນ ການ ວິເຄາະ ຄຳ ພະຍາກອນທີ່ຍັງບໍ່ສຳເລັດ. ຈາກການສຶກສານີ້ ເພິ່ນເຫັນວ່າຄວາມເຊື່ອຂອງຄົນທົ່ວໄປທີ່ວ່າ ພຣະຄຣິສ ຈະ ປົກຄອງ ແຜ່ນດິນໂລກ ທາງ ຝ່າຍ ວິນຍານ ເປັນ ເວລາ ໜຶ່ງ ພັນ ປີນັ້ນ ບໍ່ ສອດຄ່ອງ ກັບ ພຣະຄຳ ຂອງ ພຣະເຈົ້າ. ຄຳສອນທີ່ວ່າຈະມີໜຶ່ງພັນປີແຫ່ງຄວາມຊອບທຳ ແລະ ສັນຕິພາບກ່ອນການສະເດັດ ມາຂອງອົງພຣະຜູ້ເປັນເຈົ້ານີ້ ເຮັດໃຫ້ຄົນບໍ່ຢ້ານກົວຕໍ່ວັນພິພາກສາຂອງພຣະເຈົ້າ ເພາະພວກເຂົາຄິດ ວ່າມັນຍັງອີກດົນ. ເຖິງແມ່ນວ່າຄຳສອນນີ້ຈະເປັນທີ່ພໍໃຈຂອງຜູ້ຄົນກໍຕາມ, ແຕ່ມັນຂັດກັບຄຳສອນຂອງ ພຣະຄຣິສ ແລະ ພວກອັກຄະສາວົກຂອງພຣະອົງ. ພວກເພິ່ນໄດ້ປະກາດໄວ້ດັ່ງນີ້: ເຂົ້າດີ ແລະ ເຂົ້າ ນົກຈະເຕີບໂຕນຳກັນຈົນເຖິງລະດູເກັບກ່ຽວ ເຊິ່ງໝາຍເຖິງເວລາສິ້ນໂລກ. ນອກຈາກນັ້ນ, ພວກເພິ່ນ ຍັງໄດ້ກ່າວວ່າ “ຄົນຊົ່ວຮ້າຍ ແລະ ຄົນປອມຕົວຈະເພີ່ມທະວີຫຼາຍຂຶ້ນ” ແລະ “ໃນຄາວທີ່ສຸດນັ້ນ ຈະ ເກີດຄວາມລຳບາກຢ່າງຮ້າຍແຮງ.” ອານາຈັກແຫ່ງຄວາມມືດຈະຄົງຢູ່ຈົນເຖິງເວລາທີ່ອົງພຣະຜູ້ເປັນເຈົ້າ ສະເດັດມາ ແລະ ມັນຈະຖືກທຳລາຍດ້ວຍລົມພຣະໂອດຂອງພຣະອົງ ແລະ ດ້ວຍແສງອັນຮຸ່ງເຮືອງແຫ່ງ ການສະເດັດມາຂອງພຣະອົງ. (ເບິ່ງ ມັດທາຍ 13:30, 38–41; 2 ຕີໂມທຽວ 3:13, 1; 2 ເທສະໂລນີກ 2:8). {GC 321.1}

ການສະເດັດກັບມາຂອງພຣະຄຣິສ

ຄຳສອນທີ່ວ່າຄົນທັງໂລກຈະກັບໃຈ ແລະ ພຣະຄຣິສຈະປົກຄອງທາງຝ່າຍວິນຍານນັ້ນ ບໍ່ແມ່ນສິ່ງ ທີ່ຄຣິສຕະຈັກໃນສະໄໝພວກອັກຄະສາວົກເຊື່ອຖື. ຄຣິສຕຽນສ່ວນຫຼາຍເລີ່ມຍອມຮັບຄຳສອນນີ້ ພຽງ ແຕ່ໃນຕົ້ນສະຕະວັດທີ 18 ເທົ່ານັ້ນ. ຄືກັນກັບຄວາມເຊື່ອຜິດທຸກຢ່າງ, ຜົນທີ່ເກີດຂຶ້ນຈາກຄຳສອນນີ້ ແມ່ນຄວາມຊົ່ວຮ້າຍ. ຄຳສອນນີ້ເຮັດໃຫ້ຄົນເຂົ້າໃຈຜິດວ່າ ການສະເດັດມາຂອງອົງພຣະຜູ້ເປັນເຈົ້າຍັງ ເປັນເລື່ອງຂອງອະນາຄົດອັນໄກ ຈົນຜູ້ຄົນບໍ່ສົນໃຈຕໍ່ໝາຍສຳຄັນທີ່ບົ່ງບອກວ່າ ພຣະອົງໃກ້ຈະສະເດັດ ກັບມາ. ຄຳສອນນີ້ ເຮັດໃຫ້ຄົນຮູ້ສຶກໝັ້ນໃຈປອດໄພດີໂດຍບໍ່ມີພື້ນຖານຮອງຮັບ ເຊິ່ງເຮັດໃຫ້ຫຼາຍຄົນ ລະເລີຍຕໍ່ການກະກຽມພ້ອມທີ່ຈຳເປັນສຳລັບການພົບກັບອົງພຣະຜູ້ເປັນເຈົ້າຂອງພວກເຂົາ. {GC 321.2}

ມິນເລີພົບວ່າພຣະຄຳພີສອນຢ່າງແຈ່ມແຈ້ງວ່າ ພຣະຄຣິສຈະສະເດັດມາດ້ວຍຕົວພຣະອົງເອງຢ່າງ ແທ້ຈິງ. ອາຈານໂປໂລກ່າວວ່າ: “ຈະມີສຽງຮ້ອງບັນຊາອັນດັງ, ສຽງຂອງອັກຄະເທວະດາ, ສຽງແກຂອງ ພຣະເຈົ້າ ແລະ ອົງພຣະຜູ້ເປັນເຈົ້າເອງຈະສະເດັດລົງມາຈາກສະຫວັນ.” (1 ເທສະໂລນີກ 4:16). ສ່ວນ ພຣະຜູ້ຊ່ວຍໃຫ້ລອດຊົງກ່າວວ່າ: “ມະນຸດທຸກຊາດເທິງແຜ່ນດິນໂລກກໍຈະ . . .*ເຫັນ*ບຸດມະນຸດກຳລັງມາ ເທິງເມກໃນທ້ອງຟ້າ ດ້ວຍຣິດທານຸພາບ ແລະ ສະຫງ່າຣາສີອັນຍິ່ງໃຫຍ່.” “ດ້ວຍວ່າ, ບຸດມະນຸດຈະ ມາເໝືອນດັ່ງຟ້າແມບເຫຼື້ອມສົ່ງຂ້າມທົ່ວທ້ອງຟ້າ ແຕ່ທິດຕາເວັນອອກຫາທິດຕາເວັນຕົກ.” (ມັດທາຍ 24:30, 27). ພຣະອົງຈະສະເດັດມາພ້ອມດ້ວຍທູດສະຫວັນທັງມວນ. “ບຸດມະນຸດຈະສະເດັດມາໃນ ສະຫງ່າຣາສີຂອງພຣະອົງ ພ້ອມກັບເຫຼົ່າທູດສະຫວັນອັນບໍຣິສຸດທັງປວງ.” (ມັດທາຍ 25:31 TKJV). “ພຣະອົງຈະໃຊ້ບັນດາເທວະດາຂອງພຣະອົງອອກໄປດ້ວຍສຽງແກດັງກ້ອງສະໜັ່ນ, ເພື່ອຮວບຮວມເອົາ ປະຊາຊົນຂອງພຣະເຈົ້າທີ່ພຣະອົງໄດ້ເລືອກໄວ້.” (ມັດທາຍ 24:31). {GC 321.3}

ເມື່ອພຣະອົງສະເດັດມາ ຄົນຊອບທຳທີ່ຕາຍໄປແລ້ວຈະຟື້ນຈາກຄວາມຕາຍ ແລະ ຄົນຊອບທຳ ທີ່ຍັງມີຊີວິດຢູ່ ກໍຈະຖືກປ່ຽນແປງ. ອາຈານໂປໂລກ່າວວ່າ “ພວກເຮົາທັງຫຼາຍຈະບໍ່ຫຼັບໄປໝົດທຸກ ຄົນ ແຕ່ພວກເຮົາທັງໝົດຈະໄດ້ຮັບການປ່ຽນແປງ ໃນຊົ່ວຂະນະດຽວ, ໃນຊົ່ວພັບຕາດຽວ ເມື່ອເປົ່າແກ

ເທື່ອສຸດທ້າຍ. ເພາະສຽງແກຈະດັງຂຶ້ນ ຄົນຕາຍຈະຖືກບັນດານໃຫ້ເປັນຄືນມາແບບບໍ່ເປື່ອຍເນົ່າ ແລະ ພວກເຮົາຈະໄດ້ຮັບການປ່ຽນແປງ. ດ້ວຍວ່າ, ສິ່ງທີ່ເປື່ອຍເນົ່າຕ້ອງສວມໃສ່ສິ່ງທີ່ບໍ່ເປື່ອຍເນົ່າ ແລະ ສິ່ງທີ່ຕາຍເປັນຕ້ອງສວມໃສ່ສິ່ງທີ່ຕາຍບໍ່ເປັນ.” (1 ໂກຣິນໂທ 15:51–53 LCV). ສ່ວນໃນຈົດໝາຍຂອງເພິ່ນທີ່ສົ່ງໄປຍັງຄຣິສຕະຈັກໃນເມືອງເທສະໂລນີການັ້ນ, ຫຼັງຈາກທີ່ເພິ່ນອະທິບາຍເຖິງການສະເດັດມາຂອງພຣະຄຣິສແລ້ວ ເພິ່ນກ່າວວ່າ: “ພວກທີ່ເຊື່ອໃນພຣະຄຣິສທີ່ຕາຍໄປແລ້ວ ກໍຈະເປັນຄືນມາສູ່ຊີວິດກ່ອນ. ແລ້ວພວກເຮົາຜູ້ທີ່ຍັງມີຊີວິດຢູ່ໃນເວລານັ້ນ ກໍຈະຖືກຮັບຂຶ້ນໄປໃນເມກພ້ອມກັບຄົນພວກນັ້ນ ເພື່ອພົບກັບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ. ຢ່າງນັ້ນແຫຼະ, ພວກເຮົາຈຶ່ງຈະຢູ່ກັບອົງພຣະຜູ້ເປັນເຈົ້າຕະຫຼອດໄປເປັນນິດ.” (1 ເທສະໂລນີກ 4:16, 17). *{GC 322.1}*

ໄພ່ພົນຂອງພຣະຄຣິສຈະບໍ່ໄດ້ຮັບອານາຈັກ ຈົນກວ່າພຣະອົງສະເດັດມາດ້ວຍພຣະອົງເອງ. ພຣະ-ຜູ້ຊ່ວຍໃຫ້ລອດຊົງກ່າວວ່າ: “ເມື່ອບຸດມະນຸດສະເດັດມາໃນສະຫງ່າຣາສີ ພ້ອມດ້ວຍຝູງເທວະດາຂອງພຣະອົງນັ້ນ ເພິ່ນຈະນັ່ງເທິງບັນລັງອັນຮຸ່ງເຮືອງຂອງພຣະອົງ. ບັນດາປະຊາຊົນທຸກຊົນຊາດຈະຖືກນຳມາໂຮມກັນຢູ່ຕໍ່ໜ້າພຣະອົງ, ແລ້ວພຣະອົງຈະແຍກພວກເຂົາອອກຈາກກັນ ເໝືອນກັບຄົນລ້ຽງສັດແຍກຝູງແກະອອກຈາກຝູງແບ້. ພຣະອົງຈະຈັດໃຫ້ຝູງແກະຢູ່ເບື້ອງຂວາຂອງພຣະອົງ ແຕ່ຝູງແບ້ນັ້ນຈະຈັດໃຫ້ຢູ່ເບື້ອງຊ້າຍ. ແລ້ວຈອມກະສັດກໍຈະກ່າວແກ່ບັນດາຜູ້ທີ່ຢູ່ເບື້ອງຂວາຂອງພຣະອົງວ່າ, ‘ມາເຖີດ ພວກເຈົ້າຜູ້ທີ່ໄດ້ຮັບພຣະພອນຈາກພຣະບິດາເຈົ້າຂອງເຮົາ ຈົ່ງມາຮັບເອົາຣາຊອານາຈັກ ເຊິ່ງໄດ້ຖືກຈັດຕຽມໄວ້ສຳລັບພວກເຈົ້າ ຕັ້ງແຕ່ຕົ້ນເດີມສ້າງໂລກ.’” (ມັດທາຍ 25:31–34). ພວກເຮົາໄດ້ເຫັນຈາກພຣະຄຳພີທີ່ກ່າວມາທາງເທິງນີ້ວ່າ ເມື່ອບຸດມະນຸດສະເດັດມາ ຄົນທີ່ຕາຍໄປແລ້ວ ກໍຈະເປັນຄືນມາໃນສະພາບທີ່ບໍ່ເນົ່າເປື່ອຍ ແລະ ຄົນທີ່ມີຊີວິດຢູ່ກໍຈະຮັບການປ່ຽນແປງ. ການປ່ຽນແປງອັນໃຫຍ່ຫຼວງນີ້ ຈະກຽມພວກເຂົາໃຫ້ພ້ອມທີ່ຈະຮັບເອົາອານາຈັກ ເພາະອາຈານໂປໂລກ່າວວ່າ: “ສິ່ງທີ່ເປັນເນື້ອໜັງ ແລະ ເລືອດຈະມີສ່ວນໃນອານາຈັກຂອງພຣະເຈົ້າບໍ່ໄດ້ ແລະ ກາຍທີ່ເປື່ອຍເນົ່າຈະມີສ່ວນໃນກາຍທີ່ບໍ່ເປື່ອຍເນົ່າກໍບໍ່ໄດ້.” (1 ໂກຣິນໂທ 15:50). ມະນຸດໃນສະພາບປັດຈຸບັນຕ້ອງຕາຍ ແລະ ເປື່ອຍເນົ່າໄປ, ແຕ່ໃນອານາຈັກຂອງພຣະເຈົ້າຈະບໍ່ມີສິ່ງໃດເປື່ອຍເນົ່າ, ມັນເປັນອານາຈັກອັນຕະຫຼອດໄປເປັນນິດ. ສະນັ້ນ, ມະນຸດໃນສະພາບທີ່ເປັນຢູ່ໃນປັດຈຸບັນ ບໍ່ສາມາດເຂົ້າໄປໃນອານາຈັກຂອງພຣະເຈົ້າໄດ້; ແຕ່ເມື່ອພຣະເຢຊູສະເດັດມາ ພຣະອົງຈະຊົງມອບຄວາມເປັນອະມະຕະໃຫ້ແກ່ຄົນຂອງພຣະອົງ; ແລ້ວພຣະອົງຈະຍົກເອີ້ນພວກເຂົາໃຫ້ຮັບເອົາອານາຈັກນັ້ນ ທີ່ເມື່ອກ່ອນພວກເຂົາເປັນພຽງທາຍາດທີ່ຈະໄດ້ຮັບເປັນມໍລະດົກເທົ່ານັ້ນ. *{GC 322.2}*

ການລຽງລຳດັບເຫດການໃນພຣະຄຳພີ

ວິນລຽມ ມິນເລີ ເຫັນວ່າຂໍ້ພຣະຄຳພີເຫຼົ່ານີ້ ແລະ ຂໍ້ອື່ນ ໆ ໄດ້ພິສູດຢ່າງໜັກແໜ້ນວ່າ ເຫດການຕ່າງ ໆ ທີ່ ຄົນ ທົ່ວໄປ ຄາດ ຫວັງ ວ່າ ຈະ ຕ້ອງ ເກີດຂຶ້ນ ກ່ອນ ການ ສະເດັດ ມາ ຂອງ ພຣະອົງ ເຊັ່ນ: ການສະຖາປະນາອານາຈັກຂອງພຣະເຈົ້າເທິງແຜ່ນດິນໂລກ ແລະ ການປົກຄອງຢ່າງສະຫງົບສຸກນັ້ນ ກໍຈະເກີດຂຶ້ນຫຼັງຈາກການສະເດັດມາຄັ້ງທີສອງຂອງພຣະອົງ. ຍິ່ງໄປກວ່ານັ້ນ, ໝາຍສຳຄັນທັງໝົດແຫ່ງຍຸກສະໄໝ ແລະ ສະພາບການຂອງໂລກແມ່ນສອດຄ່ອງກັບຄຳພະຍາກອນທີ່ບັນລະຍາຍເຖິງຍຸກສຸດທ້າຍ. ຈາກການສຶກສາພຣະຄຳພີພຽງຢ່າງດຽວ, ເພິ່ນມາເຖິງຂໍ້ສະຫຼຸບວ່າ ໄລຍະເວລາທີ່ກຳນົດໃຫ້ກັບແຜ່ນດິນໂລກໃນສະພາບປັດຈຸບັນ ແມ່ນໃກ້ຈະສິ້ນສຸດລົງ. *{GC 323.1}*

ເພິ່ນກ່າວວ່າ: “ມີຫຼັກຖານອີກຢ່າງໜຶ່ງທີ່ສົ່ງຜົນກະທົບຢ່າງໃຫຍ່ຫຼວງຕໍ່ຈິດໃຈຂອງຂ້າພະເຈົ້າ, ນັ້ນຄື

ການລຽງລຳດັບເຫດການຕ່າງ ໆ ໃນພຣະຄຳພີ. . . . ຂ້າພະເຈົ້າພົບວ່າ ເຫດການຕ່າງ ໆ ທີ່ສຳເລັດແລ້ວ ຕາມຄຳພະຍາກອນ ກໍມັກຈະເກີດຂຶ້ນຕາມກຳນົດເວລາ, ເຊັ່ນ: 120 ປີ ເຖິງນ້ຳຖ້ວມໂລກ;[3] 7 ວັນ ກ່ອນນ້ຳຖ້ວມ ແລະ ຝົນທີ່ຕົກລົງມາ 40 ວັນຕາມທີ່ພະຍາກອນເອົາໄວ້;[4] 400 ປີ ທີ່ເຊື້ອສາຍ ຂອງອັບຣາຮາມຕ້ອງຢູ່ຢ່າງບໍ່ມີຫຼັກແຫຼ່ງຖາວອນ;[5] 3 ວັນໃນຄວາມຝັນຂອງຫົວໜ້າພະນັກງານເຫຼົ້າ ອະງຸ່ນ ແລະ ພະນັກງານເຮັດເຂົ້າຈີ່;[6] 7 ປີ ໃນຄວາມຝັນຂອງກະສັດຟາໂຣ;[7] 40 ປີ ໃນຖິ່ນແຫ້ງແລ້ງ ກັນດານ;[8] ສາມປີເຄິ່ງແຫ່ງຄວາມອຶດຢາກ;[9] . . . ການເປັນຊະເລີຍ 70 ປີ;[10] 7 ໄລຍະ ຫຼື 7 ປີ ຂອງ ກະສັດເນບູກາດເນັດຊາ;[11] ແລະ 7 ອາທິດ, 62 ອາທິດ ແລະ 1 ອາທິດ ເຊິ່ງລວມເປັນ 70 ອາທິດ ທີ່ ກຳນົດໃຫ້ແກ່ຊົນຊາດຢິວ.[12] ເຫດການທັງໝົດນີ້ເຄີຍເປັນຄຳພະຍາກອນ ແຕ່ກໍສຳເລັດຕາມທີ່ຊົງ ທຳນວາຍໄວ້."[13] *{GC 323.2}*

ດັ່ງນັ້ນ, ເມື່ອເພິ່ນສຶກສາພຣະຄຳພີ ແລະ ພົບເຫັນໄລຍະເວລາຕ່າງ ໆ ທີ່ເພິ່ນເຂົ້າໃຈວ່າ ສິ້ນສຸດ ລົງທີ່ການສະເດັດມາຄັ້ງທີສອງຂອງພຣະຄຣິສ, ເພິ່ນໄດ້ແຕ່ສະຫຼຸບວ່າ ຕ້ອງແມ່ນຊ່ວງເວລາທີ່ພຣະອົງ ຊົງກຳນົດໄວ້ລ່ວງໜ້າ ເຊິ່ງພຣະອົງຊົງສຳແດງແກ່ພວກຜູ້ຮັບໃຊ້ຂອງພຣະອົງ. ໂມເຊກ່າວວ່າ: "ສິ່ງ ລີ້ລັບທັງປວງເປັນຂອງພຣະເຢໂຮວາພຣະເຈົ້າຂອງເຮົາທັງຫຼາຍ, ແຕ່ສິ່ງຊົງສຳແດງນັ້ນ ເປັນຂອງ ເຮົາທັງຫຼາຍ ແລະ ຂອງລູກຫຼານຂອງເຮົາເປັນນິດ." ພຣະອົງຊົງກ່າວໂດຍຜູ້ເຜີຍພຣະທຳອາໂມດ ວ່າ: ພຣະອົງ "ຈະບໍ່ໄດ້ຊົງກະທຳອັນໃດເລີຍ ໂດຍບໍ່ໄດ້ເປີດເຜີຍຄວາມລັບໃຫ້ແກ່ຜູ້ຮັບໃຊ້ຂອງ ພຣະອົງລ່ວງໜ້າ ຄືຜູ້ເຜີຍພຣະທຳ."[14] ສະນັ້ນ, ຜູ້ທີ່ສຶກສາພຣະຄຳຂອງພຣະເຈົ້າສາມາດໝັ້ນໃຈໄດ້ ວ່າ ເຫດການທີ່ຍິ່ງໃຫຍ່ທີ່ສຸດໃນປະຫວັດສາດຂອງມະນຸດ ຈະຕ້ອງມີການເປີດເຜີຍຢ່າງແຈ່ມແຈ້ງໃນ ພຣະຄຳແຫ່ງຄວາມຈິງ. *{GC 324.1}*

ມິນເລີກ່າວວ່າ: "ຂ້າພະເຈົ້າໝັ້ນໃຈຢ່າງເຕັມທີ່ວ່າ, ພຣະຄຳພີທຸກຕອນໄດ້ຮັບການດົນໃຈຈາກ ພຣະເຈົ້າ ແລະ ມີປະໂຫຍດ;[15] ພຣະຄຳພີບໍ່ໄດ້ເກີດຂຶ້ນຈາກຄວາມປະສົງຂອງມະນຸດ, ແຕ່ໄດ້ຖືກ ຂຽນໄວ້ຕາມທີ່ຜູ້ບໍຣິສຸດໄດ້ຮັບການດົນໃຈຈາກພຣະວິນຍານບໍຣິສຸດ.[16] ພຣະຄຳພີຖືກຂຽນໄວ້ 'ເພື່ອ ສັ່ງສອນພວກເຮົາ, ເພື່ອວ່າພວກເຮົາຈະໄດ້ມີຄວາມຫວັງໂດຍຄວາມອົດທົນ ແລະ ມີກຳລັງໃຈຈາກ ພຣະຄຳພີ.' (ໂຣມ 15:4 LCV). ຂ້າພະເຈົ້າຈຶ່ງໄດ້ແຕ່ສະຫຼຸບວ່າ ຂໍ້ພຣະຄຳພີທີ່ກ່າວເຖິງໄລຍະ ເວລາແຫ່ງຄຳພະຍາກອນ ກໍເປັນສ່ວນໜຶ່ງຂອງພຣະຄຳພີ ແລະ ຄວນໄດ້ຮັບການເອົາໃຈໃສ່ເໝືອນ ກັບພຣະຄຳພີຕອນອື່ນ ໆ. ສະນັ້ນ, ຂ້າພະເຈົ້າຈຶ່ງຮູ້ສຶກວ່າ ໃນເມື່ອຂ້າພະເຈົ້າພະຍາຍາມເຂົ້າໃຈສິ່ງ

[3] ເບິ່ງ ປະຖົມມະການ 6:3.
[4] ເບິ່ງ ປະຖົມມະການ 7:4.
[5] ເບິ່ງ ປະຖົມມະການ 15:13.
[6] ເບິ່ງ ປະຖົມມະການ 40:12–20.
[7] ເບິ່ງ ປະຖົມມະການ 41:28–54.
[8] ເບິ່ງ ຈົດບັນຊີ 14:34.
[9] ເບິ່ງ 1 ກະສັດ 17:1; ລູກາ 4:25.
[10] ເບິ່ງ ເຢເຣມີຢາ 25:11.
[11] ເບິ່ງ ດານີເອນ 4:13–16.
[12] ເບິ່ງ ດານີເອນ 9:24–27.
[13] ຢູ້ສ, ໜ້າ 74, 75.
[14] ພຣະບັນຍັດສອງ 29:29 TKJV; ອາໂມດ 3:7 ດັດແປງຈາກສະບັບ TKJV.
[15] ເບິ່ງ 2 ຕີໂມທຽວ 3:16.
[16] ເບິ່ງ 2 ເປໂຕ 1:21.

ທີ່ພຣະເຈົ້າຊົງເປີດເຜີຍແກ່ພວກເຮົາດ້ວຍພຣະເມດຕາຂອງພຣະອົງ, ຂ້າພະເຈົ້າບໍ່ມີສິດທີ່ຈະເບິ່ງຂ້າມໄລຍະເວລາຕ່າງ ໆ ແຫ່ງຄຳພະຍາກອນ."[17] {GC 324.2}

ຄຳພະຍາກອນທີ່ເບິ່ງຄືວ່າ ໄດ້ເປີດເຜີຍ*ເວລາ*ແຫ່ງການສະເດັດກັບມາຄັ້ງທີສອງຂອງພຣະຄຣິສຢ່າງຈະແຈ້ງທີ່ສຸດແມ່ນດານີເອນ 8:14 ທີ່ກ່າວວ່າ: "ຢູ່ມາ 2,300 ວັນ ແລ້ວສະຖານບໍຣິສຸດນັ້ນຈະໄດ້ຮັບການຊຳລະ."[18] ມິນເລີໃຊ້ຫຼັກການຂອງການຕີຄວາມ ທີ່ຫາຄຳອະທິບາຍຂອງຂໍ້ພຣະຄຳພີຈາກພຣະຄຳພີຂໍ້ອື່ນ; ເພິ່ນຈຶ່ງພົບວ່າ ໜຶ່ງວັນແຫ່ງຄຳພະຍາກອນມີຄວາມໝາຍເທົ່າກັບໜຶ່ງປີ.[19] ສະນັ້ນ, 2,300 ວັນແຫ່ງຄຳພະຍາກອນຈຶ່ງເທົ່າກັບ 2,300 ປີ, ເຊິ່ງດົນກວ່າໄລຍະເວລາທີ່ກຳນົດໃຫ້ກັບຊົນຊາດຢິວ. ດ້ວຍເຫດນີ້, ສະຖານບໍຣິສຸດທີ່ກ່າວໄວ້ໃນດານີເອນ 8:14 ຈຶ່ງບໍ່ແມ່ນຫໍເຕັນສັກສິດຂອງຊາວຢິວ. ມິນເລີເຂົ້າໃຈເໝືອນຄົນທົ່ວໄປໃນສະໄໝນັ້ນວ່າ ຕັ້ງແຕ່ພຣະເຢຊູສະເດັດຂຶ້ນສະຫວັນເປັນຕົ້ນມາ ໂລກນີ້ກໍຄືສະຖານບໍຣິສຸດ; ສະນັ້ນ, ເພິ່ນຈຶ່ງເຂົ້າໃຈຜິດວ່າ ການຊຳລະສະຖານບໍຣິສຸດໃນດານີເອນ 8:14 ຕ້ອງແມ່ນການຊຳລະໂລກດ້ວຍໄຟເມື່ອພຣະຄຣິສສະເດັດກັບມາ. ເພິ່ນຈຶ່ງສະຫຼຸບວ່າ ຖ້າສາມາດຄົ້ນຫາຈຸດເລີ່ມຕົ້ນຂອງເວລາ 2,300 ວັນ ກໍຈະສາມາດຄຳນວນເວລາຂອງການສະເດັດກັບມາຢ່າງງ່າຍດາຍ. ນັ້ນຈະເປັນການສິ້ນສຸດທີ່ສຳຄັນຍິ່ງໃຫຍ່ທີ່ສຸດ ເມື່ອສະພາບປັດຈຸບັນ "ດ້ວຍຄວາມຫຍິ່ງທະນົງຕົວ, ຄວາມບ້າອຳນາດ, ການເນັ້ນຄວາມສວຍຫຼູພາຍນອກຢ່າງໄຮ້ສາລະ, ຄວາມຊົ່ວ ແລະ ການບີບບັງຄັບທັງຫຼາຍທັງມວນຈະສິ້ນສຸດລົງ," ຄືເວລາເມື່ອຄຳສາບແຊ່ງ "ຈະຖືກປົດອອກຈາກແຜ່ນດິນໂລກ, ຄວາມຕາຍຈະຖືກທຳລາຍ ແລະ ຜູ້ຮັບໃຊ້ຂອງພຣະເຈົ້າຈະຮັບບຳເໜັດລາງວັນ ຄືພວກຜູ້ເຜີຍພຣະທຳ, ຜູ້ບໍຣິສຸດຂອງພຣະເຈົ້າ ແລະ ບັນດາຄົນທັງຫຼາຍທີ່ຢຳເກງພຣະນາມຂອງພຣະອົງ; ທັງຈະທຳລາຍຄົນທັງຫຼາຍທີ່ທຳລາຍໂລກ."[20] {GC 324.3}

ພົບຄຳພະຍາກອນກ່ຽວກັບໄລຍະເວລາ

ມິນເລີສືບຕໍ່ສຶກສາຄົ້ນຄວ້າຄຳພະຍາກອນຫຼາຍຂຶ້ນດ້ວຍຄວາມກະຕືລືລົ້ນ ແລະ ການເອົາໃຈໃສ່ຍິ່ງກວ່າເກົ່າ; ບາງຄັ້ງກໍສຶກສາຕະຫຼອດທັງຄືນ, ບາງຄັ້ງກໍຄົ້ນຄວ້າຕະຫຼອດໝົດມື້ ເພາະເພິ່ນເຫັນວ່າເລື່ອງດັ່ງກ່າວສຳຄັນທີ່ສຸດ ຈຶ່ງສຸມໃສ່ກຳລັງທັງໝົດໃນເລື່ອງນີ້ເລື່ອງດຽວ. ໃນພຣະທຳດານີເອນບົດທີ 8 ເພິ່ນບໍ່ສາມາດພົບເຫັນຈຸດເລີ່ມຕົ້ນຂອງເວລາ 2,300 ວັນ. ທູດສະຫວັນຄັບຣີເອນ ເຖິງແມ່ນໄດ້ຮັບບັນຊາໃຫ້ອະທິບາຍຄວາມໝາຍຂອງນິມິດນັ້ນແກ່ດານີເອນ; ຢ່າງໃດກໍຕາມ, ເພິ່ນໄດ້ແຕ່ອະທິບາຍພຽງບາງສ່ວນເທົ່ານັ້ນ. ເມື່ອດານີເອນເຫັນເຖິງການຂົ່ມເຫັງຢ່າງຮ້າຍກາດທີ່ຈະເກີດຂຶ້ນກັບຄຣິສຕະຈັກ ເພິ່ນຈຶ່ງໝົດເຫື່ອແຮງໄປ. ເພິ່ນບໍ່ສາມາດທົນຕໍ່ໄປໄດ້, ທູດສະຫວັນກໍຈາກເພິ່ນໄປຊົ່ວໄລຍະໜຶ່ງ. ດານີເອນ "ກຸ້ມໃຈຫຼາຍ ແລະ ເຈັບປ່ວຍຢູ່ເປັນເວລາຫຼາຍວັນ." ເພິ່ນກ່າວວ່າ: "ຂ້າພະເຈົ້າຍັງງຶດງໍ້ ແລະ ບໍ່ເຂົ້າໃຈໃນນິມິດນັ້ນ." (ດານີເອນ 8:27). {GC 325.1}

ແຕ່ພຣະເຈົ້າຊົງບັນຊາແກ່ທູດສະຫວັນຂອງພຣະອົງວ່າ: "ຈົ່ງອະທິບາຍຄວາມໝາຍຂອງສິ່ງທີ່ລາວໄດ້ເຫັນນັ້ນ ໃຫ້ລາວຮູ້ແດ່." ການມອບໝາຍດັ່ງກ່າວຈະຕ້ອງໄດ້ເຮັດໃຫ້ສຳເລັດ. ຕໍ່ມາທູດສະຫວັນຈຶ່ງກັບມາເພື່ອເຮັດຕາມທີ່ໄດ້ຮັບມອບໝາຍ ແລະ ກ່າວແກ່ດານີເອນວ່າ: "ບັດນີ້ຂ້າພະເຈົ້າອອກມາ ເພື່ອຈະໃຫ້ປັນຍາ ແລະ ຄວາມເຂົ້າໃຈແກ່ທ່ານ." "ເພາະສະນັ້ນ, ຈົ່ງເຂົ້າໃຈພຣະບັນຊານັ້ນ ແລະ ພິຈາລະນາ

[17] ບ໊ຽສ, ໜ້າ 75.
[18] ດັດແປງຈາກສະບັບ TKJV.
[19] ເບິ່ງ ຈົດບັນຊີ 14:34; ເອເຊກຽນ 4:6.
[20] ບ໊ຽສ, ໜ້າ 76.

ນິມິດນັ້ນ."[21] ມີປະເດັນສຳຄັນຢູ່ປະເດັນດຽວໃນນິມິດຂອງດານີເອນບົດທີ 8 ທີ່ຍັງບໍ່ໄດ້ຮັບການອະທິບາຍ, ນັ້ນຄືໄລຍະເວລາ 2,300 ວັນ; ສະນັ້ນ, ເມື່ອທູດສະຫວັນສືບຕໍ່ການອະທິບາຍ ເພິ່ນຈຶ່ງເນັ້ນເລື່ອງເວລາຫຼາຍກວ່າເລື່ອງອື່ນ ໂດຍກ່າວວ່າ: *{GC 325.2}*

"ມີ 70 ອາທິດກຳນົດໄວ້ສຳລັບຊົນຊາດຂອງທ່ານ ແລະ ນະຄອນບໍຣິສຸດຂອງທ່ານ; . . . ເພາະ-ສະນັ້ນ, ຈົ່ງຊາບ ແລະ ເຂົ້າໃຈວ່າ ນັບຕັ້ງແຕ່ການທີ່ພຣະບັນຊານັ້ນອອກໄປໃຫ້ສ້າງນະຄອນເຢຣູຊາເລັມຂຶ້ນໃໝ່ ຈົນເຖິງສະໄໝພຣະເມຊີອາຜູ້ເປັນປະມຸກ ກໍເປັນເວລາ 7 ອາທິດ ແລະ ເປັນເວລາ 62 ອາທິດ ແລະ ຖະໜົນຈະຖືກສ້າງຂຶ້ນພ້ອມດ້ວຍກຳແພງເມືອງ ແຕ່ຈະເກີດຂຶ້ນໃນຍຸກລຳບາກ. ຫຼັງຈາກ 62 ອາທິດແລ້ວ ພຣະເມຊີອາກໍຈະຖືກຕັດອອກ ແຕ່ບໍ່ແມ່ນເພື່ອຕົວເພິ່ນເອງ; . . . ເພິ່ນຈະຢືນຢັນພັນທະສັນຍາກັບຄົນຫຼວງຫຼາຍຢູ່ 1 ອາທິດ ແລະ ໃນລະຫວ່າງກາງອາທິດນັ້ນ ເພິ່ນຈະກະທຳໃຫ້ການຖວາຍສັດບູຊາ ແລະ ເຄື່ອງບູຊາອື່ນໆຢຸດໄປ." (ດານີເອນ 9:24–27 ດັດແປງຈາກ ສະບັບ TKJV). *{GC 326.1}*

ສອງໄລຍະເວລາ ແຕ່ຈຸດເລີ່ມຕົ້ນດຽວ

ທູດສະຫວັນອົງນັ້ນ ຖືກສົ່ງໄປຫາດານີເອນ ດ້ວຍຈຸດປະສົງທີ່ຈະອະທິບາຍປະເດັນທີ່ເພິ່ນບໍ່ເຂົ້າໃຈຂອງບົດທີ 8 ຄືຂໍ້ຄວາມທີ່ກ່າວເຖິງໄລຍະເວລາວ່າ "ຢູ່ມາ 2,300 ວັນ ແລ້ວສະຖານບໍຣິສຸດນັ້ນຈະໄດ້ຮັບການຊຳລະ." ຫຼັງຈາກທີ່ຮຽກຮ້ອງໃຫ້ດານີເອນ "ຈົ່ງເຂົ້າໃຈພຣະບັນຊານັ້ນ ແລະ ພິຈາລະນານິມິດນັ້ນ," ຄຳທຳອິດຂອງທູດສະຫວັນແມ່ນ: "ມີ 70 ອາທິດກຳນົດໄວ້ສຳລັບຊົນຊາດຂອງທ່ານ ແລະ ນະຄອນບໍຣິສຸດຂອງທ່ານ." ຄຳວ່າ "ກຳນົດໄວ້" ແປກົງຕົວຄື "ຖືກຕັດອອກ." ທູດສະຫວັນກ່າວວ່າ 70 ອາທິດ ຄື 490 ປີ ຖືກຕັດອອກໃຫ້ຊົນຊາດຢິວໂດຍສະເພາະ. ແຕ່ວ່າມັນຖືກຕັດອອກຈາກສິ່ງໃດ? ໄລຍະເວລາດຽວທີ່ກ່າວເຖິງໃນບົດທີ 8 ແມ່ນ 2,300 ວັນ; ສະນັ້ນ, 70 ອາທິດ ແມ່ນຕ້ອງຖືກຕັດອອກຈາກເວລາດັ່ງກ່າວ, ຫຼືອາດຈະກ່າວອີກແບບໜຶ່ງໄດ້ວ່າ 70 ອາທິດ ຕ້ອງແມ່ນສ່ວນໜຶ່ງຂອງ 2,300 ວັນ ແລະ ສອງໄລຍະເວລານີ້ຕ້ອງເລີ່ມຕົ້ນພ້ອມກັນ. ທູດສະຫວັນກ່າວວ່າ 70 ອາທິດ ເລີ່ມຕົ້ນເມື່ອມີຄຳສັ່ງໃຫ້ສ້າງນະຄອນເຢຣູຊາເລັມຂຶ້ນໃໝ່. ຖ້າຫາກວ່າສາມາດຄົ້ນຫາວັນທີ່ຄຳສັ່ງດັ່ງກ່າວຖືກປະກາດອອກມາ ກໍຈະຮູ້ຈຸດເລີ່ມຕົ້ນຂອງໄລຍະເວລາ 2,300 ປີ. *{GC 326.2}*

ຄຳສັ່ງດັ່ງກ່າວປາກົດຢູ່ໃນພຣະທຳເອຊະຣາ 7:12–26. ອາກຕາເຊເຊັດຜູ້ເປັນກະສັດຂອງເປີເຊຍ ໄດ້ອອກຄຳສັ່ງສະບັບທີ່ຄົບຖ້ວນສົມບູນທີ່ສຸດເມື່ອປີ 457 ກ່ອນ ຄ.ສ. ໃນເອຊະຣາ 6:14 ຂຽນໄວ້ວ່າ: ພຣະວິຫານຂອງພຣະເຈົ້າໄດ້ຖືກສ້າງຂຶ້ນມາ ຕາມຄຳສັ່ງຂອງ "ບັນດາກະສັດແຫ່ງເປີເຊຍ ຄື: ໄຊຣັດ, ດາຣີອຸດ ແລະ ອາກຕາເຊເຊັດ."[22] ໃນກະສັດສາມອົງນີ້, ອົງໜຶ່ງເລີ່ມຕົ້ນການປະກາດ, ອີກອົງໜຶ່ງໄດ້ຢືນຢັນເຖິງຄຳປະກາດນັ້ນ ແລະ ອົງສຸດທ້າຍກໍໃຫ້ຄຳປະກາດນັ້ນສົມບູນຕາມທີ່ຄຳພະຍາກອນຕ້ອງການ ຈຶ່ງເປັນຈຸດເລີ່ມຕົ້ນຂອງໄລຍະເວລາ 2,300 ປີ. ເມື່ອເອົາເວລາທີ່ຄຳສັ່ງປະກາດອອກມາຢ່າງສົມບູນຄື ປີ 457 ກ່ອນ ຄ.ສ. ມາເປັນຈຸດເລີ່ມຕົ້ນ, ກໍປາກົດວ່າລາຍລະອຽດຂອງຄຳພະຍາກອນທີ່ກ່ຽວຂ້ອງກັບ 70 ອາທິດ ກໍສຳເລັດຄົບຖ້ວນຕາມທີ່ລະບຸໄວ້. *{GC 326.3}*

"ນັບຕັ້ງແຕ່ການທີ່ພຣະບັນຊານັ້ນອອກໄປ ໃຫ້ສ້າງນະຄອນເຢຣູຊາເລັມຂຶ້ນໃໝ່ ຈົນເຖິງສະໄໝພຣະເມຊີອາຜູ້ເປັນປະມຸກ ກໍເປັນເວລາ 7 ອາທິດ ແລະ ເປັນເວລາ 62 ອາທິດ," ຮວມກັນແມ່ນ 69 ອາທິດ ຫຼື 483 ປີ. ຄຳສັ່ງຂອງກະສັດອາກຕາເຊເຊັດມີຜົນບັງຄັບໃຊ້ໃນລະດູໃບໄມ້

[21] ດານີເອນ 8:27, 16; 9:22 TKJV, 23 TKJV, 25–27.
[22] ສະບັບ LCV.

ຫຼັ່ນຂອງປີ 457 ກ່ອນ ຄ.ສ. ນັບຕັ້ງແຕ່ເວລານັ້ນມາ 483 ປີ ຈຶ່ງຮອດລະດູໃບໄມ້ຫຼັ່ນຂອງ ປີ ຄ.ສ. 27. ໃນເວລາດັ່ງກ່າວຄຳພະຍາກອນນີ້ຈຶ່ງສຳເລັດ. ຄຳວ່າ: “ພຣະເມຊີອາ” ໝາຍເຖິງ “ຜູ້ ຖືກເຈີມ.” ໃນລະດູໃບໄມ້ຫຼັ່ນຂອງປີ ຄ.ສ. 27 ພຣະຄຣິສໄດ້ຮັບບັບຕິສະມາໂດຍມືຂອງໂຢຮັນ ແລະ ໄດ້ ຮັບການເຈີມຕັ້ງດ້ວຍພຣະວິນຍານບໍຣິສຸດ. ອັກຄະສາວົກເປໂຕເປັນພະຍານວ່າ: “ພຣະເຈົ້າຊົງເຈີມ ຕັ້ງພຣະເຢຊູແຫ່ງນາຊາເຣັດ ດ້ວຍພຣະວິນຍານບໍຣິສຸດ ແລະ ດ້ວຍຣິດທານຸພາບ.” (ກິດຈະການ 10:38 TNCV). ສ່ວນພຣະຜູ້ຊ່ວຍໃຫ້ລອດຊົງກ່າວດ້ວຍພຣະອົງເອງວ່າ: “ພຣະວິນຍານຂອງອົງ-ພຣະຜູ້ເປັນເຈົ້າ ຊົງສະຖິດຢູ່ເທິງຂ້ານ້ອຍ ເພາະພຣະອົງໄດ້ຫົດສົງແຕ່ງຕັ້ງຂ້ານ້ອຍໄວ້ ໃຫ້ປະກາດ ຂ່າວປະເສີດແກ່ຄົນຍາກຈົນ.” (ລູກາ 4:18). ຫຼັງຈາກການຮັບບັບຕິສະມາ ພຣະອົງສະເດັດເຂົ້າໄປໃນ ແຂວງຄາລີເລ ແລະ ປະກາດຂ່າວປະເສີດເລື່ອງແຜ່ນດິນຂອງພຣະເຈົ້າວ່າ: “*ເວລາ*ທີ່ໄດ້ກຳນົດໄວ້ມາ ເຖິງແລ້ວ.” (ມາຣະໂກ 1:14, 15). *{GC 327.1}*

ຂ່າວປະເສີດຖືກປະກາດໄປທົ່ວໂລກ

“ເພິ່ນຈະຢືນຢັນພັນທະສັນຍາກັບຄົນຫຼວງຫຼາຍຢູ່ໜຶ່ງອາທິດ.” “ໜຶ່ງອາທິດ” ທີ່ວ່ານັ້ນ ແມ່ນອາທິດ ສຸດທ້າຍຂອງ 70 ອາທິດ ຄື 7 ປີສຸດທ້າຍທີ່ກຳນົດໃຫ້ຊົນຊາດຢິວ. 7 ປີ ນີ້ ແມ່ນ ຄ.ສ. 27 ເຖິງ ຄ.ສ. 34; ໃນໄລຍະເບື້ອງຕົ້ນພຣະຄຣິສຊົງປະກາດຂ່າວປະເສີດດ້ວຍພຣະອົງເອງ ເພື່ອ ເຊີນຊວນຊາວຢິວໂດຍສະເພາະ ແລະ ຕໍ່ມາໃນໄລຍະຫຼັງພວກສາວົກຂອງພຣະອົງກໍສານຕໍ່ການປະກາດ ດັ່ງກ່າວ. ໃນຂະນະທີ່ພວກອັກຄະສາວົກອອກໄປປະກາດຂ່າວສານອັນໜ້າຍິນດີເລື່ອງຣາຊອານາຈັກຂອງ ພຣະເຈົ້າ, ພຣະຜູ້ຊ່ວຍໃຫ້ລອດຊົງສັ່ງໄວ້ວ່າ: “ຢ່າໄປໃນທາງຂອງພວກຕ່າງຊາດ ຫຼື ຢ່າເຂົ້າໄປໃນເມືອງ ຂອງຊາວຊາມາເຣຍ ແຕ່ຈົ່ງໄປຫາຝູງແກະທີ່ເສຍແຫ່ງປະຊາຊົນຂອງຊາດອິດສະຣາເອນ.” (ມັດທາຍ 10:5, 6). *{GC 327.2}*

“ໃນລະຫວ່າງກາງອາທິດນັ້ນ ເພິ່ນຈະກະທຳໃຫ້ການຖວາຍສັດບູຊາ ແລະ ເຄື່ອງບູຊາອື່ນໆ ຢຸດໄປ.”[23] ອົງພຣະຜູ້ເປັນເຈົ້າຂອງພວກເຮົາ ຖືກຄຶງໄວ້ເທິງໄມ້ກາງແຂນໃນປີ ຄ.ສ. 31 ຄືສາມປີ ເຄິ່ງຫຼັງຈາກທີ່ພຣະອົງໄດ້ຮັບບັບຕິສະມາ. ການສະຫຼະອັນໃຫຍ່ຫຼວງທີ່ພູເຂົາຄານວາຣີນັ້ນ ເປັນການ ສິ້ນສຸດຂອງລະບົບການຖວາຍບູຊາ ທີ່ຊີ້ໄປຍັງລູກແກະຂອງພຣະເຈົ້າຕະຫຼອດ 4,000 ປີ. ເມື່ອພຣະອົງ ສິ້ນພຣະຊົນ ເງົາສັນຍະລັກຕ່າງໆໄດ້ສຳເລັດເປັນຈິງ; ສະນັ້ນ, ລະບົບການຖວາຍບູຊາທັງໝົດຈຶ່ງ ສິ້ນສຸດລົງພຽງເທົ່ານັ້ນ. *{GC 327.3}*

ເຈັດສິບອາທິດ ຫຼື 490 ປີ ທີ່ກຳນົດໃຫ້ຊົນຊາດຢິວໂດຍສະເພາະນັ້ນ ໄດ້ສິ້ນສຸດລົງຕາມທີ່ ກ່າວມາແລ້ວໃນປີ ຄ.ສ. 34. ໃນເວລານັ້ນ ສະພາຊັນເຮດຣິນຂອງຊາວຢິວໄດ້ລົງມືປະຫານຊີວິດ ຊະເຕຟາໂນ ແລະ ຂົ່ມເຫັງຄົນທັງຫຼາຍທີ່ຕິດຕາມພຣະຄຣິສ ຈຶ່ງເປັນການຢືນຢັນວ່າ ຊົນຊາດຢິວ ໄດ້ປະຕິເສດຂ່າວປະເສີດ. ຕັ້ງແຕ່ນັ້ນມາ, ຂ່າວສານເລື່ອງຄວາມລອດ ບໍ່ໄດ້ຖືກຈຳກັດຢູ່ສະເພາະ ກັບຊົນຊາດທີ່ຊົງເລືອກໄວ້ພຽງຊາດດຽວ ແຕ່ໃຫ້ປະກາດໄປທົ່ວໂລກ. ພວກສາວົກທີ່ຕ້ອງໜີອອກຈາກ ນະຄອນເຢຣູຊາເລັມຍ້ອນການຖືກຂົ່ມເຫັງ “ຕ່າງກໍໄດ້ປະກາດຂ່າວປະເສີດຕາມບ່ອນຕ່າງໆ. ຝ່າຍ ຟີລິບໄດ້ໄປທີ່ເມືອງໃຫຍ່ໃນແຂວງຊາມາເຣຍ ແລະ ປະກາດເລື່ອງພຣະຄຣິສໃນທີ່ນັ້ນ.” ພຣະເຈົ້າ ຊົງນຳໃຫ້ເປໂຕອະທິບາຍຂ່າວປະເສີດໃຫ້ໂກເນລີໂອຜູ້ຢຳເກງພຣະເຈົ້າ ແລະ ເປັນນາຍຮ້ອຍທີ່ເມືອງ ກາຍຊາເຣຍ; ສ່ວນໂປໂລຜູ້ຫ້າວຫັນນັ້ນ ໄດ້ຮັບເຊື່ອໃນພຣະຄຣິສ ແລະ ຖືກສົ່ງໄປໄກເພື່ອປະກາດຂ່າວ ອັນໜ້າຍິນດີແກ່ຄົນຕ່າງຊາດ. (ເບິ່ງ ກິດຈະການ 8:4, 5; 22:21). *{GC 328.1}*

[23] ດານີເອນ 9:27 ດັດແປງຈາກສະບັບ TKJV.

ເຮົາຈະເຫັນໄດ້ວ່າ ລາຍລະອຽດທຸກປະການຂອງຄຳພະຍາກອນເລື່ອງ 70 ອາທິດ ໄດ້ສຳເລັດຕາມ ທີ່ທຳນວາຍໄວ້ຢ່າງໜ້າປະທັບໃຈ. ນອກຈາກນັ້ນ, ມີການລະບຸໄວ້ຢ່າງແນ່ນອນວ່າ 70 ອາທິດດັ່ງກ່າວ ໄດ້ເລີ່ມຕົ້ນໃນປີ 457 ກ່ອນ ຄ.ສ. ແລະ ສິ້ນສຸດລົງໃນປີ ຄ.ສ. 34. ຈາກຂໍ້ມູນເຫຼົ່ານີ້, ກໍບໍ່ຍາກທີ່ຈະ ຄຳນວນເວລາທີ່ຄຳພະຍາກອນເລື່ອງ 2,300 ວັນ ຈະສິ້ນສຸດລົງ. 70 ອາທິດ ຫຼື 490 ວັນ ຖືກຕັດ ອອກຈາກ 2,300 ວັນ, ສະນັ້ນຍັງເຫຼືອອີກ 1,810 ວັນ. ສະແດງວ່າ ຫຼັງຈາກ 490 ວັນ ກໍຍັງຕ້ອງ ມີອີກ 1,810 ວັນ ຄຳພະຍາກອນເຖິງຈະສຳເລັດ. ຈາກ ຄ.ສ. 34 ບວກອີກ 1,810 ປີ ກໍມາເຖິງ ປີ ຄ.ສ. 1844. ດັ່ງນັ້ນ 2,300 ວັນຂອງດານີເອນ 8:14 ຈຶ່ງສິ້ນສຸດລົງໃນປີ 1844. ທູດສະຫວັນຂອງ ພຣະເຈົ້າໄດ້ກ່າວໄວ້ວ່າ ເມື່ອສິ້ນສຸດໄລຍະເວລາອັນຍາວນານຂອງຄຳພະຍາກອນແລ້ວ “ສະຖານບໍຣິສຸດ ນັ້ນຈະໄດ້ຮັບການຊຳລະ.” ຈາກຄຳພະຍາກອນທີ່ກ່າວມານີ້ ກໍສາມາດລະບຸເວລາຢ່າງແນ່ນອນວ່າ ການ ຊຳລະສະຖານບໍຣິສຸດຈະເກີດຂຶ້ນເມື່ອໃດ, ແຕ່ໃນສະໄໝນັ້ນຄົນເກືອບທັງໝົດເຊື່ອວ່າ ການຊຳລະ ສະຖານບໍຣິສຸດຈະເກີດຂຶ້ນເມື່ອພຣະເຢຊູສະເດັດກັບມາ. *{GC 328.2}*

ໃນເບື້ອງຕົ້ນ ມິນເລີ ແລະ ຜູ້ທີ່ຮ່ວມປະກາດກັບເພິ່ນເຊື່ອວ່າ 2,300 ວັນຂອງດານີເອນ 8:14 ຈະ ສິ້ນສຸດລົງໃນ *ລະດູໃບໄມ້ປົ່ງ* ຂອງປີ 1844, ແຕ່ໃນຄວາມເປັນຈິງຄຳພະຍາກອນຊີ້ໄປຍັງ *ລະດູໃບ ໄມ້ຫຼົ່ນ* ຂອງປີນັ້ນ. ຄວາມຜິດພາດໃນປະເດັນນີ້ໄດ້ສ້າງຄວາມຜິດຫວັງ ແລະ ຄວາມສັບສົນສຳລັບ ຄົນເຫຼົ່ານັ້ນທີ່ຄາດການໄວ້ຢ່າງໝັ້ນໃຈວ່າ ການສະເດັດມາຂອງພຣະຄຣິສຈະມາໃນລະດູໃບໄມ້ປົ່ງໃນ ປີດັ່ງກ່າວ. ແຕ່ສິ່ງນີ້ບໍ່ໄດ້ກະທົບຕໍ່ຫຼັກຖານທີ່ວ່າ 2,300 ວັນ ຕ້ອງສິ້ນສຸດລົງໃນປີ 1844 ແຕ່ ຢ່າງໃດ; ແລະກໍບໍ່ໄດ້ກະທົບຕໍ່ຄວາມຈິງທີ່ວ່າ ການຊຳລະສະຖານບໍຣິສຸດຈະຕ້ອງເກີດຂຶ້ນໃນປີນັ້ນ ອັນ ເປັນເຫດການທີ່ສຳຄັນຍິ່ງ. *{GC 328.3}*

ຕົກໃຈກັບຂໍ້ສະຫຼຸບ

ເມື່ອ ມິນເລີ ເລີ່ມສຶກສາພຣະຄຳພີເພື່ອພິສູດວ່າ ເປັນການເປີດເຜີຍຈາກພຣະເຈົ້າ ເພິ່ນບໍ່ໄດ້ຄາດ ຄິດເລີຍວ່າ ເພິ່ນຈະມາເຖິງຂໍ້ສະຫຼຸບຕາມທີ່ເປັນຢູ່ໃນເວລານັ້ນ; ເພິ່ນເກືອບຈະບໍ່ເຊື່ອຂໍ້ສະຫຼຸບທີ່ໄດ້ຈາກ ການຄົ້ນຄວ້າ. ແຕ່ຫຼັກຖານຂອງພຣະຄຳພີມີນ້ຳໜັກ ແລະ ຈະແຈ້ງທີ່ສຸດຈົນເພິ່ນບໍ່ສາມາດປະຖິ້ມ ໄດ້. *{GC 329.1}*

ມິນເລີ ໄດ້ໃຊ້ເວລາສອງປີໃນການສຶກສາພຣະຄຳພີ; ພໍເຖິງປີ 1818 ເພິ່ນມາເຖິງຂໍ້ສະຫຼຸບ ທີ່ເຊື່ອໝັ້ນວ່າອີກປະມານ 25 ປີ ພຣະຄຣິສຈະສະເດັດມາປາກົດ ເພື່ອຊົງໄຖ່ບັນດາໄພ່ພົນຂອງ ພຣະອົງ. ມິນເລີກ່າວວ່າ, “ຂ້າພະເຈົ້າບໍ່ຈຳເປັນຕ້ອງເວົ້າເຖິງຄວາມປິຕິຍິນດີທີ່ເຕັມຫົວໃຈ ເມື່ອເຫັນວ່າ ການສະເດັດກັບມາຂອງພຣະອົງໃກ້ເຂົ້າມາແລ້ວ; ແລະບໍ່ຕ້ອງເວົ້າເຖິງຄວາມປາຖະໜາອັນສຸດຊຶ້ງ ທີ່ ຢາກມີສ່ວນຮ່ວມກັບຄວາມສຸກແສນຍິນດີຂອງຄົນເຫຼົ່ານັ້ນທີ່ຈະໄດ້ຮັບການຊົງໄຖ່. ເວລານັ້ນພຣະຄຳພີ ໄດ້ກາຍເປັນໜັງສືເຫຼັ້ມໃໝ່ສຳລັບຂ້າພະເຈົ້າ; ທຸກຢ່າງສົມເຫດສົມຜົນຢ່າງໜ້າປະທັບໃຈ ຈົນອ່ານ ເທົ່າໃດກໍບໍ່ອີ່ມ; ທຸກສິ່ງທີ່ເຄີຍຄຸມເຄືອ, ເລິກລັບ ຫຼື ຖືກປິດບັງໄວ້ໃນພຣະຄຳພີ ໄດ້ກາຍເປັນ ຄວາມກະຈ່າງ ຍ້ອນແສງແຫ່ງຄວາມຈິງທີ່ສ່ອງອອກມາໃນແຕ່ລະໜ້າ; ໂອ ຄວາມຈິງອັນປະເສີດ ໄດ້ປາກົດຢ່າງສະຫວ່າງສະໄຫວໃຫ້ຂ້າພະເຈົ້າເຫັນ! ຂໍ້ຄວາມໃນພຣະຄຳພີທີ່ຂ້າພະເຈົ້າເຄີຍຮູ້ສຶກວ່າມີ ຄວາມຂັດແຍ້ງກັນນັ້ນ ກໍໝົດຄວາມຂັດແຍ້ງ; ແລະເຖິງແມ່ນວ່າ ມີຫຼາຍຕອນທີ່ຂ້າພະເຈົ້າຮູ້ສຶກວ່າ ຍັງເຂົ້າໃຈບໍ່ໝົດ ແຕ່ເນື່ອງຈາກແສງສະຫວ່າງອັນເຈີດຈ້າຂອງພຣະຄຳພີ ທີ່ສ່ອງເຂົ້າມາໃນຈິດໃຈຂອງ ຂ້າພະເຈົ້າທີ່ເຄີຍມືດມົນນັ້ນ, ຂ້າພະເຈົ້າຈຶ່ງຮູ້ສຶກວ່າມີຄວາມສຸກທີ່ສຸດໃນການສຶກສາພຣະຄຳພີ, ເຊິ່ງ

ກ່ອນໜ້ານັ້ນຂ້າພະເຈົ້າບໍ່ເຄີຍຄາດຄິດວ່າ ຄຳສອນຂອງພຣະຄຳພີຈະສາມາດໃຫ້ຄວາມສຸກຂະໜາດນັ້ນ ໄດ້."[24] *{GC 329.2}*

"ໃນເມື່ອຂ້າພະເຈົ້າມີຄວາມເຊື່ອໝັ້ນວ່າ ເຫດການອັນສຳຄັນທີ່ພຣະຄຳພີທຳນວາຍໄວ້ກຳລັງຈະ ເກີດຂຶ້ນໃນບໍ່ຊ້າ, ຂ້າພະເຈົ້າຈຶ່ງຮູ້ສຶກຢ່າງແຮງກ້າວ່າ ຂ້າພະເຈົ້າຕ້ອງຮັບຜິດຊອບຕໍ່ຫຼັກຖານຕ່າງ ໆ ທີ່ສ້າງຄວາມປະທັບໃຈໃຫ້ແກ່ຂ້າພະເຈົ້າ ແລະ ນຳໄປປະກາດໃຫ້ຊາວໂລກຮູ້."[25] ເພິ່ນບໍ່ສາມາດຮູ້ສຶກ ເປັນຢ່າງອື່ນໄດ້, ນອກຈາກວ່າ ຕົນມີໜ້າທີ່ທີ່ຈະຕ້ອງນຳເອົາຄວາມສະຫວ່າງທີ່ໄດ້ຮັບ ໄປປະກາດໃຫ້ ຄົນອື່ນ. ເພິ່ນຄາດໝາຍວ່າຄົນທີ່ບໍ່ເຊື່ອໃນພຣະເຈົ້າຈະຕໍ່ຕ້ານເພິ່ນ, ແຕ່ກໍໝັ້ນໃຈວ່າ ຄຣິສຕຽນທຸກຄົນ ຈະສະແດງຄວາມຍິນດີກັບຄວາມຫວັງທີ່ຈະພົບກັບພຣະຜູ້ຊ່ວຍໃຫ້ລອດທີ່ພວກເຂົາອ້າງວ່າຮັກນັ້ນ. ມີ ຢ່າງດຽວເທົ່ານັ້ນທີ່ເພິ່ນຮູ້ສຶກກັງວົນຢູ່; ຄືເພິ່ນຢ້ານວ່າ ພວກຄຣິສຕຽນຈະຮັບເອົາເລື່ອງການປົດປ່ອຍອັນ ສະຫວ່າງສະໄຫວ ທີ່ກຳລັງຈະເກີດຂຶ້ນນັ້ນດ້ວຍຄວາມຍິນດີຫຼາຍທີ່ສຸດ, ຈົນເປັນເຫດໃຫ້ຫຼາຍຄົນບໍ່ຍອມ ສຶກສາປຽບທຽບຂໍ້ພຣະຄຳພີທີ່ກ່ຽວຂ້ອງກັບເລື່ອງນີ້ເທົ່າທີ່ຄວນ. ເພິ່ນຈຶ່ງລັງເລທີ່ຈະສອນເລື່ອງນີ້, ເພາະ ຢ້ານວ່າ ຖ້າເພິ່ນມີຄວາມເຂົ້າໃຈຜິດກໍຈະນຳຜູ້ຄົນໃຫ້ຫຼົງທາງ. ເພິ່ນຈຶ່ງທົບທວນຫຼັກຖານຕ່າງ ໆ ທີ່ສະໜັບສະໜູນຂໍ້ສະຫຼຸບຂອງເພິ່ນ ແລະ ພິຈາລະນາຂໍ້ຫຍຸ້ງຍາກທຸກຢ່າງທີ່ຄິດໄດ້ດ້ວຍຄວາມ ລະມັດລະວັງ. ເພິ່ນພົບວ່າ ແສງສະຫວ່າງທີ່ສ່ອງອອກຈາກພຣະຄຳຂອງພຣະເຈົ້າ ໄດ້ກຳຈັດປັດເປົ່າ ຂໍ້ຄັດຄ້ານຕ່າງ ໆໃຫ້ຫາຍໄປ ເໝືອນດັ່ງເມກໝອກທີ່ຈາງຫາຍໄປເມື່ອແສງອາທິດສ່ອງມາ. ຫຼັງຈາກ ການໃຊ້ເວລາຫ້າປີໃນການທົບທວນດັ່ງກ່າວ ເພິ່ນມີຄວາມໝັ້ນໃຈຢ່າງເຕັມທີ່ວ່າ ຈຸດຢືນຂອງເພິ່ນນັ້ນ ຖືກຕ້ອງ. *{GC 329.3}*

"ຈົ່ງໄປປະກາດໃຫ້ຊາວໂລກຮູ້"

ບັດນີ້ເພິ່ນມາຮູ້ສຶກຢ່າງແຮງກ້າວ່າ ຕົນມີໜ້າທີ່ທີ່ຈະປະກາດເລື່ອງທີ່ເພິ່ນເຊື່ອວ່າເປັນຄຳສອນອັນ ຈະແຈ້ງຂອງພຣະຄຳພີ. ມິນເລີກ່າວວ່າ: "ເມື່ອຂ້າພະເຈົ້າກຳລັງເຮັດວຽກງານໃນແຕ່ລະວັນ ມີສຽງກ້ອງ ຢູ່ໃນຫູຕະຫຼອດເວລາວ່າ, 'ຈົ່ງໄປເຕືອນຊາວໂລກເຖິງໄພອັນຕະລາຍຂອງພວກເຂົາ.' ມີຂໍ້ພຣະຄຳພີດັ່ງຢູ່ ໃນໃຈເລື້ອຍ ໆ ວ່າ: 'ຖ້າເຮົາປະກາດວ່າຄົນຊົ່ວຜູ້ໜຶ່ງກຳລັງຈະຕາຍ ແຕ່ເຈົ້າບໍ່ໄດ້ຕັກເຕືອນລາວໃຫ້ປ່ຽນ ທິດທາງເພື່ອຊ່ວຍຊີວິດຂອງຕົນໄວ້; ແລ້ວລາວກໍຈະຕາຍເສຍທັງ ໆ ທີ່ຍັງເປັນຄົນບາບຢູ່; ເຮົາຈະຖືວ່າ ການຕາຍຂອງຄົນນັ້ນເປັນຄວາມຮັບຜິດຊອບຂອງເຈົ້າ. ຖ້າເຈົ້າຕັກເຕືອນຄົນຊົ່ວຜູ້ໜຶ່ງ ແລະ ລາວບໍ່ ເຊົາເຮັດບາບ ລາວກໍຈະຕາຍທັງ ໆ ທີ່ລາວຍັງເປັນຄົນບາບຢູ່, ແຕ່ເຈົ້າເອງຈະລອດຊີວິດ.' (ເອເຊກຽນ 33:8, 9). ຂ້າພະເຈົ້າຮູ້ສຶກວ່າ ຖ້າຫາກຄົນຊົ່ວໄດ້ຮັບການຕັກເຕືອນຢ່າງແທ້ຈິງ ຈະມີຄົນຈຳນວນ ຫຼວງຫຼາຍກັບໃຈ ແລະ ຖ້າບໍ່ໄດ້ເຕືອນແລ້ວ ຂ້າພະເຈົ້າຈະຕ້ອງຮັບຜິດຊອບຕໍ່ຄວາມພິນາດຂອງ ພວກເຂົາ."[26] *{GC 330.1}*

ເມື່ອມີໂອກາດ ມິນເລີເລີ່ມແນະນຳຄົນອື່ນເປັນການສ່ວນຕົວເຖິງຄວາມຄິດເຫັນຂອງຕົນ ໂດຍ ອະທິຖານຂໍໃຫ້ມີສາສະໜາຈານຄົນໃດຄົນໜຶ່ງມາເທັນຄວາມສຳຄັນ ແລະ ອຸທິດຕົນເພື່ອການປະກາດ ເລື່ອງດັ່ງກ່າວ. ແຕ່ເພິ່ນບໍ່ສາມາດປະຕິເສດຄວາມຮູ້ສຶກທີ່ວ່າ ເພິ່ນມີໜ້າທີ່ສ່ວນຕົວໃນການປະກາດ ເຕືອນຄົນອື່ນ. ຖ້ອຍຄຳເດີມຍັງຄົງກ້ອງຢູ່ໃນໃຈເລື້ອຍ ໆ ວ່າ: "ຈົ່ງໄປບອກໃຫ້ຊາວໂລກຮູ້; ເລືອດຂອງ ພວກເຂົານັ້ນເຮົາຈະຮຽກຮ້ອງຈາກມືຂອງເຈົ້າ." ມິນເລີລໍຖ້າເປັນເວລາເກົ້າປີ ໂດຍພາລະອັນໜັກໜ່ວງນັ້ນ

[24] ປ໊ຽສ, ໜ້າ 76, 77.

[25] *ອ້າງອີງຈາກທີ່ດຽວກັນ*, ໜ້າ 81.

[26] ປ໊ຽສ, ໜ້າ 92.

ກົດທັບຢູ່ທີ່ຫົວໃຈ; ຈົນໃນປີ 1831 ເພິ່ນໄດ້ປະກາດເຫດຜົນແຫ່ງຄວາມເຊື່ອຂອງຕົນໃນທີ່ສາທາລະນະ ເປັນຄັ້ງທຳອິດ. {GC 330.2}

ເໝືອນດັ່ງເອລີຊາທີ່ພຣະເຈົ້າຊົງຮຽກເອີ້ນຈາກການໄຖນາ ເພື່ອອຸທິດຕົນຮັບໃຊ້ໃນຕຳແໜ່ງຂອງ ຜູ້ເຜີຍພຣະທຳ, ວິນລຽມ ມິນເລີ ກໍຖືກຮຽກເອີ້ນໃຫ້ປະຄັນໄຖ ເພື່ອອະທິບາຍຄວາມລີ້ລັບແຫ່ງອານາຈັກ ຂອງພຣະເຈົ້າ. ເພິ່ນເລີ່ມວຽກງານດັ່ງກ່າວດ້ວຍຄວາມຢຳເກງຈົນຕົວສັ່ນ ແລະ ໄດ້ນຳຜູ້ຟັງທັງຫຼາຍ ໃຫ້ ພິຈາລະນາໄລຍະເວລາຕ່າງ ໆ ຂອງຄຳພະຍາກອນຕັ້ງແຕ່ເລີ່ມຕົ້ນ ຈົນເຖິງການສະເດັດມາຄັ້ງທີສອງ ຂອງພຣະຄຣິສ. ທຸກຄັ້ງທີ່ອອກໄປປະກາດ ເພິ່ນກໍໄດ້ຮັບການເສີມກຳລັງ ແລະ ມີກຳລັງໃຈຫຼາຍ ຂຶ້ນ ເມື່ອເຫັນຜູ້ຄົນສົນໃຈໃນຄຳສອນຂອງເພິ່ນ. {GC 331.1}

ມີແຕ່ການຂໍຮ້ອງຂອງພີ່ນ້ອງເທົ່ານັ້ນ ທີ່ເຮັດໃຫ້ມິນເລີຍອມແບ່ງປັນຄວາມຄິດເຫັນຂອງຕົນໃຫ້ກັບ ຄົນທົ່ວໄປ ເພາະເພິ່ນຮູ້ສຶກວ່ານັ້ນແມ່ນການຮຽກເອີ້ນຂອງພຣະເຈົ້າ. ຕອນນັ້ນເພິ່ນອາຍຸຫ້າສິບປີ, ບໍ່ ຄຸ້ນເຄີຍກັບການປາໄສ ແລະ ມີຄວາມຮູ້ສຶກວ່າຕົນບໍ່ເໝາະສົມກັບວຽກງານທີ່ຢູ່ຕໍ່ໜ້າເພິ່ນ; ແຕ່ ການປະກາດຂອງເພິ່ນໄດ້ຮັບພຣະພອນຕັ້ງແຕ່ເລີ່ມຕົ້ນ ເຊິ່ງເຫັນໄດ້ຈາກຄົນຈຳນວນຫຼາຍທີ່ກັບໃຈຮັບ ຄວາມລອດ. ການປາໄສຄັ້ງທຳອິດສົ່ງຜົນໃຫ້ເກີດການຟື້ນຟູດ້ານຈິດວິນຍານ ໂດຍມີສິບສາມຄອບຄົວ ກັບໃຈໝົດທຸກຄົນ ຍົກເວັ້ນສອງຄົນທີ່ບໍ່ກັບໃຈ. ມິນເລີຈຶ່ງໄດ້ຮັບເຊີນໃຫ້ໄປເທດສະໜາໃນບ່ອນອື່ນ ໆ ທັນທີ ແລະ ເກືອບທຸກບ່ອນທີ່ເພິ່ນໄດ້ໄປນັ້ນກໍເກີດການຟື້ນຟູໃນວຽກງານຂອງພຣະເຈົ້າ. ຄົນ ບາບໄດ້ຖິ້ມໃຈເກົ່າເອົາໃຈໃໝ່, ຄຣິສຕຽນໄດ້ຮັບແຮງກະຕຸ້ນໃຫ້ອຸທິດຕົນຫຼາຍຂຶ້ນ; ສ່ວນຄົນທີ່ບໍ່ນັບຖື ພຣະເຈົ້າ ແລະ ພວກລັດທິດີອິສທີ່ເຊື່ອວ່າພຣະເຈົ້າບໍ່ມີສ່ວນກ່ຽວຂ້ອງກັບມະນຸດ ກໍມາຍອມຮັບວ່າ ພຣະຄຳພີ ແລະ ຄຳສອນຂອງສາສະໜາຄຣິສເປັນຄວາມຈິງ. ຜູ້ທີ່ຟັງເພິ່ນກໍເປັນພະຍານວ່າ: “ເພິ່ນ ເຂົ້າເຖິງຄົນປະເພດໜຶ່ງທີ່ຄົນອື່ນເຂົ້າບໍ່ເຖິງ.”[27] ເພິ່ນຕັ້ງໃຈປະກາດໃນລັກສະນະທີ່ຈະປຸກຄົນທົ່ວໄປໃນ ສັງຄົມໃຫ້ຕື່ນ ເພື່ອພິຈາລະນາຫົວຂໍ້ສຳຄັນຂອງສາສະໜາ ແລະ ເພື່ອຢັບຢັ້ງການເສື່ອມເສຍທາງ ສິນທຳ ແລະ ການປ່ອຍຕົວເຮັດຕາມອາລົມທີ່ເພີ່ມທະວີຄູນຕາມສະໄໝນິຍົມ. {GC 331.2}

ໃນເກືອບທຸກເມືອງມີຄົນກັບໃຈຍ້ອນຄຳເທດສະໜາຂອງເພິ່ນ, ເປັນຫຼັກສິບຫຼັກຊາວ ແລະ ບາງຄັ້ງ ຫຼັກຮ້ອຍ. ໃນຫຼາຍບ່ອນຄຣິສຕຽນເກືອບທຸກຄະນະຂອງນິກາຍໂປຣແຕັສຕັງ ໄດ້ເປີດປະຕູໂບດຕ້ອນຮັບ ໃຫ້ເພິ່ນເທດສະໜາ; ສ່ວນຫຼາຍແມ່ນພວກສາສະໜາຈານຂອງຄຣິສຕະຈັກເຫຼົ່ານັ້ນ ທີ່ເຊີນໃຫ້ເພິ່ນ ເທດສະໜາ. ເພິ່ນມີນະໂຍບາຍຢ່າງເດັດຂາດວ່າ ຈະບໍ່ປະກາດໃນບ່ອນທີ່ບໍ່ໄດ້ຮັບເຊີນ; ແຕ່ບໍ່ຊ້າ, ເພິ່ນ ພົບວ່າມີຄົນເຊີນຊວນຫຼາຍ ຈົນເພິ່ນຕ້ອງປະຕິເສດຄຳເຊີນຊວນຫຼາຍກວ່າເຄິ່ງໜຶ່ງ. ຫຼາຍຄົນທີ່ບໍ່ຍອມຮັບ ຄວາມຄິດເຫັນຂອງເພິ່ນໃນລາຍລະອຽດເລື່ອງເວລາຂອງການສະເດັດມາຄັ້ງທີສອງຂອງພຣະຄຣິສ ກໍຍັງ ເຊື່ອໝັ້ນວ່າ ການສະເດັດມາຂອງພຣະອົງແນ່ນອນ ແລະ ໃກ້ເຂົ້າມາ; ພວກເຂົາຮູ້ສຶກວ່າຕ້ອງການກຸງມ ຕົວ. ໃນເມືອງໃຫຍ່ບາງແຫ່ງ ຜົນທີ່ເກີດຈາກການປະກາດຂອງເພິ່ນເຫັນໄດ້ຢ່າງຊັດເຈນ: ຄົນຂາຍເບຍ ຂາຍເຫຼົ້າໄດ້ເຊົາຂາຍ ແລະ ປ່ຽນຮ້ານຂອງພວກເຂົາເປັນຫ້ອງປະຊຸມ; ບ່ອນພະນັນກໍຖືກຍົກເລີກ; ຄົນ ທີ່ບໍ່ເຊື່ອ, ຄົນລັດທິດີອິສ, ຄົນທີ່ເຊື່ອວ່າມະນຸດທຸກຄົນຈະລອດ ແລະ ແມ່ນແຕ່ຄົນບາບໜາທີ່ສຸດ ກໍ ໄດ້ຮັບການປ່ຽນແປງ ເຊິ່ງກ່ອນໜ້ານັ້ນບາງຄົນບໍ່ໄດ້ເຂົ້າໂບດມາເປັນເວລາຫຼາຍປີ. ແຕ່ລະຄະນະນິກາຍ ກໍຈັດປະຊຸມອະທິຖານໃນບ່ອນຕ່າງ ໆ ແລະ ເກືອບທຸກຊົ່ວໂມງ; ສ່ວນນັກທຸລະກິດກໍໄປຮວມຕົວກັນ ໃນຊ່ວງພັກທ່ຽງ ເພື່ອອະທິຖານ ແລະ ສັນລະເສີນພຣະເຈົ້າ. ບໍ່ມີຄວາມຕື່ນເຕັ້ນຈົນເກີນໄປ, ແຕ່ ຄົນທັງຫຼາຍມີຄວາມສະຫງົບໃຈ. ວຽກງານການປະກາດຂອງເພິ່ນ ເໝືອນກັບການປະກາດຂອງພວກ

[27] *ອ້າງອີງຈາກທີ່ດຽວກັນ*, ໜ້າ 138.

ນັກປະຕິຮູບໃນສະໄໝກ່ອນ ທີ່ເນັ້ນການສອນໃຫ້ຄົນເຂົ້າໃຈ ແລະ ການປຸກຈິດສຳນຶກຜິດຊອບຫຼາຍກວ່າການກະຕຸ້ນອາລົມໃຫ້ຄົນຄ້ອຍຕາມ. {GC 331.3}

ໃນປີ 1833 ມິນເລີໄດ້ຮັບໃບອະນຸຍາດໃຫ້ເທດສະໜາໄດ້ຈາກຄຣິສຕະຈັກຄະນະບັບຕິສ, ເຊິ່ງເພິ່ນກໍເປັນສະມາຊິກຂອງຄຣິສຕະຈັກນີ້. ມີສາສະໜາຈານຈຳນວນຫຼວງຫຼາຍໃນຄະນະດັ່ງກ່າວ ເຫັນດີນຳກັບການປະກາດຂອງເພິ່ນ; ເພິ່ນຈຶ່ງປະກາດຕໍ່ໄປ ດ້ວຍການສະໜັບສະໜູນຢ່າງເປັນທາງການຈາກພວກເຂົາ. ເພິ່ນໄດ້ເດີນທາງໄປປະກາດຢ່າງບໍ່ຢຸດບໍ່ເຊົາ ເຖິງແມ່ນການປະກາດສ່ວນໃຫຍ່ຈະຢູ່ໃນພາກນິວອິງແລນ ແລະ ໃນບັນດາລັດທີ່ຖັດລົງໄປທາງໃຕ້. ຄ່າໃຊ້ຈ່າຍທັງໝົດຂອງການປະກາດໃນຫຼາຍປີນັ້ນ ມາຈາກຊັບສິນສ່ວນຕົວ; ແລະຕໍ່ມາເມື່ອໄດ້ຮັບຄ່າເດີນທາງໄປປະກາດໃນບ່ອນທີ່ຮັບເຊີນ ຄ່າເດີນທາງເຫຼົ່ານັ້ນບໍ່ເຄີຍພຽງພໍສຳລັບຄ່າໃຊ້ຈ່າຍຕົວຈິງ. ດັ່ງນັ້ນ, ແທນທີ່ວຽກງານການປະກາດຈະໄດ້ປະໂຫຍດໃນດ້ານການເງິນ ກັບເປັນພາລະໜັກໃຫ້ກັບຊັບສິນສ່ວນຕົວທີ່ຄ່ອຍ ໆ ຫຼຸດລົງໃນຊ່ວງນີ້ຂອງຊີວິດ. ເພິ່ນເປັນພໍ່ຂອງຄອບຄົວໃຫຍ່; ແຕ່ເນື່ອງຈາກທຸກຄົນເປັນຄົນປະຢັດ ແລະ ເປັນຄົນດຸໝັ່ນ, ຜົນຜະລິດຈາກໄຮ່ນາຂອງເພິ່ນຈຶ່ງພຽງພໍສຳລັບຕົນເອງ ແລະ ຄອບຄົວ. {GC 332.1}

ດາວຕົກຄັ້ງໃຫຍ່

ໃນປີ 1833, ສອງປີຫຼັງຈາກມິນເລີເລີ່ມປະກາດເຖິງຫຼັກຖານທີ່ຊີ້ໃຫ້ເຫັນວ່າ ການສະເດັດມາຂອງພຣະຄຣິສນັ້ນໃກ້ເຂົ້າມາແລ້ວ, ໝາຍສຳຄັນອັນສຸດທ້າຍກໍເກີດຂຶ້ນ ຕາມທີ່ພຣະຜູ້ຊ່ວຍໃຫ້ລອດຊົງສັນຍາໄວ້ວ່າ ຈະຕ້ອງເກີດຂຶ້ນກ່ອນການສະເດັດມາຄັ້ງທີສອງຂອງພຣະອົງ. ພຣະເຢຊູຊົງກ່າວວ່າ: “ດວງດາວທັ້ງຫຼາຍຈະຕົກລົງຈາກທ້ອງຟ້າ.” (ມັດທາຍ 24:29). ສ່ວນໂຢຮັນກໍຂຽນໃນພຣະທຳພຣະນິມິດ ຕາມນິມິດທີ່ເພິ່ນເຫັນ ແລະ ກ່າວເຖິງເຫດການອັນເປັນເຄື່ອງໝາຍຂອງວັນສຳຄັນຂອງພຣະເຈົ້າວ່າ: “ດວງດາວທັ້ງຫຼາຍໃນທ້ອງຟ້າກໍຕົກລົງເທິງແຜ່ນດິນ ເໝືອນດັ່ງໝາກເດື່ອດິບຕົກຫຼົ່ນລົງຈາກຕົ້ນ ເພາະລົມພະຍຸພັດ.” (ພຣະນິມິດ 6:13). ຄຳພະຍາກອນນີ້ໄດ້ສຳເລັດລົງຢ່າງໜ້າປະທັບໃຈ ເມື່ອດາວຕົກຄັ້ງໃຫຍ່ໃນວັນທີ 13 ພະຈິກ 1833. ນັ້ນເປັນປາກົດການດາວຕົກທີ່ກວ້າງຂວາງ ແລະ ໜ້າປະຫຼາດໃຈທີ່ສຸດ ເທົ່າທີ່ມີການບັນທຶກໃນປະຫວັດສາດ. “ໃນເວລານັ້ນ, ທ້ອງຟ້າທັງໝົດທົ່ວສະຫະລັດເໝືອນດັ່ງໄຟເຜົາເປັນເວລາຫຼາຍຊົ່ວໂມງ! ບໍ່ເຄີຍມີປາກົດການໃນທ້ອງຟ້າໃນປະເທດນີ້ ນັບຕັ້ງແຕ່ມີການຕັ້ງຫຼັກປັກຖານມາ ທີ່ມີຄົນກຸ່ມໜຶ່ງເຝົ້າເບິ່ງດ້ວຍຄວາມອັດສະຈັນໃຈຢ່າງເລິກເຊິ່ງ ໃນຂະນະທີ່ອີກກຸ່ມໜຶ່ງເຫັນເປັນສິ່ງທີ່ໜ້າຢ້ານກົວທີ່ສຸດ.” “ຄວາມສວຍງາມຂອງເຫດການນັ້ນ ຍັງປະທັບໄວ້ໃນຄວາມຊົງຈຳຂອງຄົນຫຼວງຫຼາຍ. . . . ຝົນບໍ່ເຄີຍຕົກລົງມາໜາຫຼາຍໄປກວ່າດາວຕົກດິນໃນຄາວນັ້ນ; ບໍ່ວ່າຈະທິດເໜືອ, ທິດໃຕ້, ຕາເວັນອອກ ຫຼື ຕາເວັນຕົກກໍເໝືອນກັນ. ສະຫຼຸບວ່າ ທ້ອງຟ້າທັງໝົດເບິ່ງຄືວ່າກຳລັງເຄື່ອນໄຫວ. . . . ປາກົດການທີ່ເຫັນຢູ່ທົ່ວທະວີບອາເມຣິກາເໜືອກໍເປັນໄປຕາມທີ່ບັນທຶກໄວ້ໃນ*ວາລະສານຂອງສາດສະດາຈານສິນລິມັນ* (Professor Silliman’s Journal) ເຊິ່ງຂຽນໄວ້ວ່າ: . . . ນັບຕັ້ງແຕ່ສອງໂມງກາງຄືນຊອດແຈ້ງ ທ້ອງຟ້າບໍ່ມີເມກເລີຍ ລົມກໍບໍ່ພັດ, ມີສາຍດາວຕົກອັນເຈີດຈ້າສະຫວ່າງສະໄຫວປາກົດຢູ່ທົ່ວທ້ອງຟ້າຢ່າງບໍ່ຢຸດບໍ່ເຊົາ.”[28] {GC 333.1}

“ແທ້ຈິງແລ້ວ ບໍ່ມີພາສາໃດທີ່ຈະສາມາດບັນລະຍາຍເຖິງຄວາມງົດງາມ ແລະ ຄວາມຍິ່ງໃຫຍ່ຂອງປາກົດການນັ້ນໄດ້. . . . ສຳລັບຄົນທີ່ບໍ່ໄດ້ເຫັນເຫດການນັ້ນ ກໍຈະບໍ່ສາມາດຈິນຕະນາການເຖິງຄວາມ

[28] ອາ. ເອັມ. ເດເວນ (R. M. Devens), *ຄວາມກ້າວໜ້າຂອງອາເມຣິກາ*; ຫຼື *ເຫດການທີ່ຍິ່ງໃຫຍ່ຂອງສະຕະວັດທີ່ສຳຄັນທີ່ສຸດ*, ບົດ 28, ວັກ 1–5.

ສະຫວ່າງເຈີດຈ້າຂອງມັນໄດ້. ມັນເບິ່ງຄືວ່າ ດວງດາວທັງໝົດຂອງທ້ອງຟ້າໄດ້ມາເຕົ້າໂຮມກັນຢູ່ໃກ້ຈຸດສູງສຸດ ແລ້ວກໍພຸ່ງກະຈາຍໄປຫາທຸກສ່ວນຂອງຂອບຟ້າພ້ອມ ໆ ກັນຢ່າງໄວວາ ດັ່ງສາຍຟ້າແມບໂດຍບໍ່ມອດລົງ; ຈາກນັ້ນກໍມີດາວຕົກນັບເປັນພັນ ໆ ດວງຕາມຮ່ອງຮອຍຂອງດາວຊຸດເດີມຢ່າງຟ້າວຟັ່ງ ເໝືອນມັນຖືກສ້າງມາເພື່ອໂອກາດໃນຄັ້ງນັ້ນ.”[29] “ຄົງບໍ່ມີປາກົດການອື່ນເກີດຂຶ້ນທີ່ເໝືອນໝາກເດືອຖືກລົມແຮງພັດລົງມາ ເຊັ່ນດຽວກັບປາກົດການໃນຄັ້ງນັ້ນ.”[30] *{GC 333.2}*

ໃນ*ໜັງສືພິມການຄ້າ*ຂອງນິວຢອກ (New York Journal of Commerce) ສະບັບວັນທີ 14 ພະຈິກ 1833 ມີບົດຄວາມຍາວກ່ຽວກັບປາກົດການອັນປະເສີດນີ້ ເຊິ່ງມີຂໍ້ຄວາມວ່າ: “ຂ້າພະເຈົ້າຄິດວ່າ ຄົງບໍ່ມີນັກປັດຊະຍາ ຫຼື ນັກວິຊາການຄົນໃດ ເຄີຍບັນທຶກເຫດການເໝືອນທີ່ເກີດຂຶ້ນໃນຕອນເຊົ້າຂອງມື້ວານນີ້. ມີຜູ້ເຜີຍພຣະທຳ 1,800 ປີມາແລ້ວ ໄດ້ທຳນວາຍເຖິງເຫດການນີ້ລ່ວງໜ້າຢ່າງຖືກຕ້ອງແນ່ນອນ; ຄືຖ້າເຮົາຈະຍອມຮັບວ່າການຕົກຂອງດວງດາວ ໝາຍເຖິງດາວຕົກນັ້ນເອງ ເຊິ່ງຖ້າຈະຕີຄວາມຕາມຕົວ ກໍບໍ່ສາມາດໝາຍເຖິງຢ່າງອື່ນໄດ້.” *{GC 334.1}*

ດ້ວຍເຫດນີ້, ຈຶ່ງເປັນການປາກົດຂອງໝາຍສຳຄັນອັນສຸດທ້າຍຂອງການສະເດັດມາຂອງພຣະເຢຊູ. ພຣະອົງຊົງເຕືອນພວກສາວົກຂອງພຣະອົງວ່າ: “ເມື່ອພວກເຈົ້າເຫັນເຫດການນັ້ນເກີດຂຶ້ນ ພວກເຈົ້າ*ກໍຈະຮູ້ໄດ້ວ່າ* ເວລາມາໃກ້ແລ້ວ ພ້ອມທີ່ຈະເກີດຂຶ້ນ.” (ມັດທາຍ 24:33). ຫຼັງຈາກໝາຍສຳຄັນເຫຼົ່ານີ້ ໂຢຮັນໄດ້ເຫັນເຫດການອັນຍິ່ງໃຫຍ່ທີ່ຈະເກີດຂຶ້ນຫຼັງຈາກນັ້ນ ຄືທ້ອງຟ້າຈະມ້ວນຄືນເໝືອນດັ່ງໜັງສືມ້ວນ; ໃນຂະນະທີ່ແຜ່ນດິນໂລກສັ່ນສະເທືອນ, ພູເຂົາ ແລະ ເກາะທັງຫຼາຍກໍຈະເຄື່ອນຍ້າຍໄປຈາກບ່ອນຂອງມັນ ແລະ ຄົນຊົ່ວຮ້າຍຈະພະຍາຍາມໜີຈາກບຸດມະນຸດ ດ້ວຍຄວາມສະທ້ານຢ້ານກົວ. (ເບິ່ງ ພຣະນິມິດ 6:12–17). *{GC 334.2}*

ຫຼາຍຄົນທີ່ໄດ້ເຫັນການຕົກຂອງດວງດາວ ຖືວ່າເປັນໝາຍສຳຄັນທີ່ປະກາດເຖິງການພິພາກສາທີ່ກຳລັງຈະເກີດຂຶ້ນ; “ເປັນການຊີ້ບອກລ່ວງໜ້າຢ່າງໜ້າເກງຂາມ ແລະ ເປັນໝາຍສຳຄັນແຫ່ງຄວາມເມດຕາວ່າ ວັນອັນສຳຄັນຍິ່ງໃຫຍ່ນັ້ນກຳລັງຈະມາເຖິງ.”[31] ດັ່ງນັ້ນ, ຄົນທັງຫຼາຍຈຶ່ງຫັນມາໃຫ້ຄວາມສົນໃຈກັບຄວາມສຳເລັດຂອງຄຳພະຍາກອນ ແລະ ມີຫຼາຍຄົນຍອມຮັບເອົາຄຳຕັກເຕືອນ ເລື່ອງການສະເດັດມາຄັ້ງທີສອງຂອງພຣະຄຣິສ. *{GC 334.3}*

ໃນປີ 1840 ຄຳພະຍາກອນອີກຢ່າງໜຶ່ງໄດ້ສຳເລັດລົງຢ່າງໜ້າປະທັບໃຈ ເຮັດໃຫ້ຜູ້ຄົນສົນໃຈຢ່າງກວ້າງຂວາງ. ໂຢສີຢາ ລິດຈ໌ ເປັນໜຶ່ງໃນຜູ້ນຳພວກສາສະໜາຈານ ທີ່ປະກາດເລື່ອງການສະເດັດກັບມາຂອງພຣະຄຣິສ; ໃນປີ 1838 ເພິ່ນຕີພິມຄຳອະທິບາຍພຣະນິມິດບົດທີ 9 ໂດຍທຳນວາຍໄວ້ວ່າ ອານາຈັກໂອໂຕມັນຂອງຊາວເທີກຈະໝົດອຳນາດລົງ. ອີງຕາມການຄິດໄລ່ຂອງເພິ່ນ, ອານາຈັກດັ່ງກ່າວຈະຖືກໂຄ່ນລົ້ມ “ປະມານເດືອນສິງຫາ 1840.” ແລ້ວກ່ອນທີ່ຄຳພະຍາກອນຈະສຳເລັດເລັກນ້ອຍ ເພິ່ນກໍຂຽນວ່າ: “ຖ້າຫາກວ່າໄລຍະເວລາ 150 ປີ ທຳອິດໄດ້ສຳເລັດລົງກ່ຶງເວລາຢ່າງຖືກຕ້ອງແນ່ນອນນັ້ນ ໂດຍທີ່ ດີໂກເຊ (Deacozes) ຂຶ້ນບັນລັງຕາມການອະນຸຍາດຈາກພວກຊາວເທີກ ແລະ ຖ້າເວລາ 391 ປີ ບວກກັບອີກ 15 ວັນ ເລີ່ມຕົ້ນໃນຕອນທ້າຍຂອງໄລຍະທຳອິດ, ສະແດງວ່າ ມັນຈະສິ້ນສຸດລົງໃນວັນທີ 11 ສິງຫາ 1840; ສະນັ້ນ, ພວກເຮົາສາມາດຄາດຄະເນໄດ້ວ່າ ໃນມື້ນັ້ນ

[29] ບົດຄວາມຂອງ ເອຟ. ຣີດ ໃນໜັງສືພິມ *Christian Advocate and Journal*, 13 ທັນວາ 1833.

[30] ບົດຄວາມ “ຊາວນາຄົນຊະລາ” (“The Old Countryman”), ໃນໜັງສືພິມ *Portland Evening Advertiser*, ວັນທີ 26 ພະຈິກ 1833.

[31] ບົດຄວາມ “ຊາວນາຄົນຊະລາ” ໃນໜັງສືພິມ *Portland Evening Advertiser*, ວັນທີ 26 ພະຈິກ 1833.

ອຳນາດຂອງອານາຈັກໂອໂຕມັນໃນນະຄອນຄອນສະແຕນຕິນໂອເປິນ (Constantinople) ຈະຖືກໂຄ່ນ ລົ້ງ. ຂ້າພະເຈົ້າເຊື່ອວ່າຈະເກີດຂຶ້ນຕາມນີ້ເລີຍ."[32] *{GC 334.4}*

ເຫດການເກີດຂຶ້ນຕາມທີ່ທຳນວາຍໄວ້

ໃນເວລາທີ່ລະບຸໄວ້ ຄະນະທູດຂອງຕຸຣະກີ ໄດ້ຍອມຮັບການປົກປ້ອງຄຸ້ມຄອງຈາກປະເທດພັນທະມິດ ຂອງເອີຣົບ ເຊິ່ງເປັນການມອບຕົນເອງໃຫ້ຢູ່ພາຍໃຕ້ການຄວບຄຸມຂອງບັນດາປະເທດຄຣິສຕຽນ. ເຫດ-ການດັ່ງກ່າວເປັນການສຳເລັດຂອງຄຳພະຍາກອນກົ່ງຕ໋ວຕາມທີ່ຂຽນໄວ້. ເມື່ອຂ່າວເລື່ອງນີ້ຖືກເຜີຍແຜ່ ອອກໄປ ມີຄົນຈຳນວນຫຼວງຫຼາຍເຊື່ອໝັ້ນວ່າ ຫຼັກການທີ່ມິນເລີກັບເພື່ອນຮ່ວມງານໃຊ້ໃນການຕີຄວາມ ໝາຍຂອງຄຳພະຍາກອນນັ້ນຖືກຕ້ອງ, ສິ່ງນີ້ຈຶ່ງເປັນແຮງສະໜັບສະໜູນແກ່ການປະກາດເລື່ອງການ ສະເດັດກັບມາຂອງພຣະຄຣິສ. ຜູ້ຊາຍບາງຄົນທີ່ມີການສຶກສາ ແລະ ມີຕຳແໜ່ງຮັບຜິດຊອບ ກໍ ມາຮ່ວມທີມງານກັບມິນເລີທັ້ງໃນການເທດສະໜາ ແລະ ໃນການຕີພິມຄຳສອນຂອງເພິ່ນ; ດັ່ງນັ້ນ, ລະຫວ່າງປີ 1840 ເຖິງ ປີ 1844 ວຽກງານການປະກາດດັ່ງກ່າວຈຶ່ງໄດ້ຂະຫຍາຍອອກໄປຢ່າງ ໄວວາ. *{GC 335.1}*

ວິນລຽມ ມິນເລີ ເປັນຄົນມີພະລັງສະໝອງທີ່ໄດ້ຮັບການຝຶກຝົນດ້ວຍການຄິດໄຕ່ຕອງ ແລະ ການ ຄົ້ນຄວ້າ; ນອກຈາກນັ້ນ, ເພິ່ນຍັງໄດ້ຮັບສະຕິປັນຍາຈາກສະຫວັນ ດ້ວຍການຕິດສະໜິດກັບພຣະເຈົ້າ ຜູ້ຊົ່ງເປັນແຫຼ່ງປັນຍາ. ເພິ່ນເປັນຄົນທ່ຽງທຳ ແລະ ເປັນທີ່ນັບໜ້າຖືຕາໃນທຸກບ່ອນທີ່ເຫັນຄຸນຄ່າຂອງ ອຸປະນິໄສທີ່ສັດຊື່ ແລະ ສິນທຳອັນດີງາມ. ເພິ່ນເປັນຄົນມີໃຈເມດຕາຢ່າງແທ້ຈິງ ແລະ ເປັນຄົນຖ່ອມ ຕົ໋ວຕາມແບບຂອງຄຣິສຕຽນ ທັງເປັນຄົນທີ່ມີວິໄນໃຫ້ກັບຕົ໋ວເອງ, ເອົາໃຈໃສ່ ແລະ ມີຄວາມຮັກຕໍ່ທຸກ ຄົນ, ພ້ອມທີ່ຈະຮັບຟັງຄວາມຄິດເຫັນ ແລະ ພິຈາລະນາເຫດຜົນຂອງຄົນອື່ນ. ເພິ່ນທົດສອບທິດສະດີ ຕ່າງ ໆ ດ້ວຍຈິດໃຈທີ່ສະຫງົບ ແລະ ພິຈາລະນາຄຳສອນທຸກຢ່າງດ້ວຍພຣະຄຳຂອງພຣະເຈົ້າ; ການໃຊ້ ເຫດຜົນຢ່າງຮອບຄອບ ແລະ ການຮູ້ພຣະຄຳພີຢ່າງຄົບຖ້ວນ ເຮັດໃຫ້ເພິ່ນສາມາດໂຕ້ແຍ້ງຄຳສອນທີ່ບໍ່ ຈິງ. *{GC 335.2}*

ແຕ່ໃນຂະນະດຽວກັນ ມີຄົນຕໍ່ຕ້ານວຽກງານການປະກາດຂອງເພິ່ນຢ່າງຮ້າຍກາດ. ເຊັ່ນດຽວກັບ ພວກນັກປະຕິຮູບລຸ້ນກ່ອນ ໆ, ຜູ້ສອນສາສະໜາທີ່ຜູ້ຄົນໃນສັງຄົມນິຍົມຊົມຊອບ ກໍ່ບໍ່ໄດ້ຍອມຮັບຄວາມ ຈິງທີ່ເພິ່ນສອນ. ເນື່ອງຈາກຄົນເຫຼົ່ານີ້ບໍ່ມີພຣະຄຳພີຮອງຮັບຈຸດຢືນຂອງຕົນ, ພວກເຂົາຈຶ່ງຢຶດເອົາ ຖ້ອຍຄຳ ແລະ ຄຳສອນຂອງມະນຸດ ແລະ ທຳນຽມຂອງບັນດານັກຂຽນຄຣິສຕຽນຍຸກເລີ່ມຕົ້ນ. ແຕ່ ພຣະຄຳຂອງພຣະເຈົ້າເປັນພະຍານດຽວ ທີ່ຜູ້ສອນຄວາມຈິງເລື່ອງການສະເດັດກັບມາຍອມຮັບໄດ້. ຄຳ ຂວັນຂອງພວກເຂົາຄື "ພຣະຄຳພີພຽງຢ່າງດຽວເທົ່ານັ້ນ." ແຕ່ໃນເມື່ອຝ່າຍທີ່ຕໍ່ຕ້ານຂາດພຣະຄຳພີ ສະໜັບສະໜູນ ພວກເຂົາຈຶ່ງໃຊ້ການເຍາะເຍີ້ຍຫົ໋ວຂວັນແທນ. ມີການທຸ້ມເທເວລາ, ຊັບສິນ ແລະ ຄວາມສາມາດ ເພື່ອໃສ່ຮ້າຍປ້າຍສີຄົນບໍຣິສຸດທີ່ຂັດຫູຂັດຕາ ຍ້ອນວ່າພວກເຂົາເຝົ້າລໍຄອຍການສະເດັດ ກັບມາຂອງອົ໋ງພຣະຜູ້ເປັນເຈົ້າຂອງຕົນ, ພະຍາຍາມໃຊ້ຊີວິດຢ່າງບໍຣິສຸດ ແລະ ຊັກຊວນຄົນອື່ນໃຫ້ກຽມ ພ້ອມສຳລັບການສະເດັດກັບມາຂອງພຣະອົ໋ງ. *{GC 335.3}*

ຄົນທີ່ຕໍ່ຕ້ານນັ້ນ ມີຄວາມພະຍາຍາມຢ່າງພາກພຽນທີ່ຈະດຶງຄວາມສົນໃຈຂອງປະຊາຊົນອອກຈາກ ເລື່ອງການສະເດັດກັບມາຂອງພຣະຄຣິສ. ພວກເຂົາສອນວ່າ ການສຶກສາຄຳພະຍາກອນທີ່ກ່ຽວຂ້ອງ

[32] ບົດຄວາມຂອງ ໂຢສີຢາ ລິດຈ໋ ໃນວາລະສານ *Signs of the Times, and Expositor of Prophecy*, ວັນ ທີ 1 ສິງຫາ 1840.

ກັບການສະເດັດກັບມາຂອງພຣະຄຣິສ ແລະ ການສິ້ນໂລກນັ້ນ ເປັນຄວາມບາບ ແລະ ເປັນເລື່ອງ ທີ່ໜ້າອັບອາຍ. ພວກສາສະໜາຈານທີ່ໄດ້ຮັບຄວາມນິຍົມຊົມຊອບຈາກຄົນໃນສັງຄົມ ຈຶ່ງທຳລາຍ ຄວາມເຊື່ອໃນພຣະຄຳຂອງພຣະເຈົ້າຢ່າງນີ້ແຫຼະ. ຄຳສອນຂອງພວກເຂົາເປັນເຫດໃຫ້ຄົນບໍ່ເຊື່ອໃນ ພຣະເຈົ້າ ແລະ ມີຫຼາຍຄົນປ່ອຍຕົວເອງໃຫ້ເຮັດຕາມຄວາມປາຖະໜາຊົ່ວຂອງຈິດໃຈ; ແລ້ວຄົນທີ່ຢູ່ເບື້ອງ ຫຼັງຄວາມຊົ່ວເຫຼົ່ານີ້ ກໍໂຍນຄວາມຜິດໃຫ້ກັບກຸ່ມແອັດເວັນຕິສ ຄືຜູ້ທີ່ກຳລັງລໍຖ້າການສະເດັດກັບມາ ຂອງພຣະເຢຊູ. {GC 336.1}

ເຖິງແມ່ນວ່າມີປັນຍາຊົນມາຟັງມິນເລີດ້ວຍໃຈຈົດຈໍ່ເຕັມຫ້ອງປະຊຸມຢູ່ເລື້ອຍໆ ແຕ່ພວກໜັງສື ພິມຄຣິສຕຽນບໍ່ຄ່ອຍໄດ້ຂຽນເຖິງເພິ່ນ ນອກຈາກຈະເປັນການປະນາມເຍາະເຍີ້ຍ. ຄົນທີ່ບໍ່ເອົາໃຈໃສ່ ແລະ ຄົນຊົ່ວເຫັນທ່າທີຂອງພວກຜູ້ນຳສາສະໜາແລ້ວ ຈຶ່ງຮູ້ສຶກໃຈກ້າຂຶ້ນມາ; ພວກເຂົາຈຶ່ງເຍາະເຍີ້ຍ ຢ່າງເສຍຫາຍ ແລະ ໃຊ້ຖ້ອຍຄຳສຽດສີທີ່ແຫຼມຄົມ ເພື່ອປະໝາດຢ່າງຕ່ຳຊ້າ, ທັງໝົດນີ້ກໍເພື່ອ ດູຖູກມິນເລີ ແລະ ວຽກງານການປະກາດຂອງເພິ່ນ. ມິນເລີຜູ້ຊາຍຜົມຫງອກ ໄດ້ປະເຮືອນຊານ ອັນສະດວກສະບາຍ ເພື່ອໄປຕາມເມືອງຕ່າງໆດ້ວຍທຶນຂອງຕົນເອງ ແລະ ເຮັດວຽກຢ່າງບໍ່ຢຸດ ບໍ່ເຊົາ ເພື່ອເຕືອນຊາວໂລກເຖິງການພິພາກສາທີ່ໃກ້ຈະມາເຖິງ; ແຕ່ເພິ່ນພັດຖືກຄົນອື່ນປະນາມ ເຍາະເຍີ້ຍ ແລະ ຖືກໃສ່ຮ້າຍວ່າເປັນຄົນບ້າສາສະໜາ, ເປັນພວກສິບແປດມົງກຸດທີ່ອາໄສການຫຼອກລວງ ເພື່ອຫວັງຜົນກຳໄລ. {GC 336.2}

ແຕ່ມີຄົນອອກມາສະແດງຄວາມບໍ່ພໍໃຈຕໍ່ການປະນາມຫົວຂວັນ ແລະ ການໃສ່ຮ້າຍປ້າຍສີຢ່າງບໍ່ ເປັນຄວາມຈິງນີ້; ແມ່ນແຕ່ໜັງສືພິມທົ່ວໄປ ກໍຍັງປະນາມການເຍາະເຍີ້ຍດັ່ງກ່າວ ແລະ ຊາວໂລກ ເອງກໍຍັງປະກາດວ່າ ການເວົ້າເຍາະເຍີ້ຍຫົວຂວັນ “ເລື່ອງທີ່ມີຄວາມສຳຄັນອັນຍິ່ງໃຫຍ່ ແລະ ມີຜົນ ສະທ້ອນອັນໜ້າຢ້ານກົວ” ນັ້ນ ບໍ່ພຽງແຕ່ເປັນ “ການຫຼີ້ນກັບຄວາມຮູ້ສຶກຂອງຜູ້ປະກາດ ແລະ ຜູ້ ສະໜັບສະໜູນ” ເທົ່ານັ້ນ, ແຕ່ຍັງເປັນ “ການເຮັດໃຫ້ອັນພິພາກສາກາຍເປັນເລື່ອງຕະຫຼົກ, ເປັນ ການເຍາະເຍີ້ຍພຣະເຈົ້າ ແລະ ເປັນການໝິ່ນປະໝາດຄວາມໜ້າຢ້ານກົວຂອງບັນລັງພິພາກສາຂອງ ພຣະອົງ.”[33] {GC 336.3}

ມານຊາຕານຜູ້ຍຸແຍ ໃຫ້ເກີດຄວາມຊົ່ວຮ້າຍທັງປວງ ບໍ່ພຽງແຕ່ພະຍາຍາມຂັດຂວາງ ບໍ່ໃຫ້ຂ່າວການ ສະເດັດກັບມາປະສົບຜົນສຳເລັດເທົ່ານັ້ນ ແຕ່ຍັງຢາກທຳລາຍຜູ້ປະກາດອີກດ້ວຍ. ມິນເລີໄດ້ນຳເອົາ ສັດຈະທຳໃນພຣະຄຳພີມາປັບໃຊ້ກັບຊີວິດຈິງຂອງຜູ້ຟັງ, ທັງໄດ້ກ່າວປະນາມຄວາມຜິດບາບ ແລະ ສອນ ໃຫ້ພວກເຂົາບໍ່ໄວ້ວາງໃຈໃນຕົນເອງ; ແຕ່ຖ້ອຍຄຳອັນກົ້ງໄປກົ້ງມາ ແລະ ກົ້ງປະເດັນຂອງເພິ່ນເຮັດໃຫ້ ບາງຄົນກຽດຊັງ. ການທີ່ສະມາຊິກຄຣິສຕະຈັກຕໍ່ຕ້ານຄຳສອນຂອງເພິ່ນ, ເຮັດໃຫ້ຄົນທີ່ບໍ່ມີສາສະໜາຍິ່ງ ກ້າຫານທີ່ຈະເຮັດຊົ່ວຫຼາຍກວ່າເກົ່າ; ສ່ວນພວກສັດຕູ ກໍວາງແຜນເພື່ອໝາຍເອົາຊີວິດຂອງມິນເລີ ໃນ ຂະນະທີ່ເພິ່ນອອກຈາກຫ້ອງປະຊຸມ. ແຕ່ທູດສະຫວັນບໍຣິສຸດໄດ້ຢູ່ທີ່ນັ້ນ; ມີທູດສະຫວັນອົງໜຶ່ງໃນຮູບ ຮ່າງຂອງມະນຸດ ໄດ້ຈັບແຂນຂອງມິນເລີຜູ້ຮັບໃຊ້ຂອງພຣະເຈົ້າ ແລະ ນຳເພິ່ນຜ່ານຝູງຄົນທີ່ໃຈຮ້າຍໄປ ຢ່າງປອດໄພ. ວຽກງານຂອງເພິ່ນຍັງບໍ່ທັນສຳເລັດເທື່ອ; ຊາຕານ ແລະ ຜູ້ຮັບໃຊ້ຂອງມັນຈຶ່ງຕ້ອງຜິດ ຫວັງທີ່ແຜນການຂອງພວກມັນລົ້ມເຫຼວ. {GC 336.4}

[33] ບຼິສ, ໜ້າ 183.

ບາງຄົນສົນໃຈ ບາງຄົນບໍ່ເຊື່ອ

ເຖິງແມ່ນຈະມີການຕໍ່ຕ້ານຄັດຄ້ານກໍຕາມ ແຕ່ຄວາມສົນໃຈໃນເລື່ອງການສະເດັດກັບມາຂອງພຣະ-ຄຣິສໄດ້ເພີ່ມທະວີຂຶ້ນຢ່າງຕໍ່ເນື່ອງ. ຕອນເລີ່ມຕົ້ນ, ມີຄົນຟັງເປັນຫຼັກສິບຫຼັກຮ້ອຍ ແຕ່ຕໍ່ມາກໍມີຄົນມາຟັງເປັນຫຼັກພັນ. ຄຣິສຕະຈັກຕ່າງ ໆ ມີສະມາຊິກເພີ່ມຂຶ້ນຫຼາຍ; ແຕ່ເມື່ອເວລາຜ່ານໄປກໍມີກະແສຕໍ່ຕ້ານ, ແມ່ນແຕ່ສະມາຊິກໃໝ່ເຫຼົ່ານັ້ນກໍຖືກຕໍ່ຕ້ານດ້ວຍ; ຄຣິສຕະຈັກທັງຫຼາຍກໍເລີ່ມມີມາດຕະການລົງໂທດຜູ້ທີ່ຮັບເອົາຄຳສອນຂອງມິນເລີ. ມິນເລີຈຶ່ງຂຽນຕອບໂຕ້ການກະທຳດັ່ງກ່າວຂອງຄຣິສຕະຈັກທຸກຄະນະນິກາຍ ໂດຍຮຽກຮ້ອງວ່າ ຖ້າຄຳສອນຂອງເພິ່ນບໍ່ເປັນຄວາມຈິງ ກໍຂໍໃຫ້ພິສູດໃຫ້ເຫັນຈາກພຣະຄຳພີ. {GC 337.1}

ເພິ່ນກ່າວວ່າ: “ມີຫຍັງແດ່ທີ່ພວກເຮົາເຊື່ອທີ່ພຣະຄຳຂອງພຣະເຈົ້າບໍ່ໄດ້ສັ່ງໃຫ້ເຊື່ອ? ທ່ານທັງຫຼາຍເອງຍອມຮັບວ່າ ພຣະຄຳຂອງພຣະເຈົ້າເປັນບັນທັດຖານພຽງຢ່າງດຽວແຫ່ງຄວາມເຊື່ອ ແລະ ການປະພຶດປະຕິບັດຂອງເຮົາບໍ່ແມ່ນບໍ? ພວກເຮົາໄດ້ເຮັດຫຍັງແດ່ ທີ່ຄວນໄດ້ຮັບການປະນາມຢ່າງຮຸນແຮງເຊັ່ນນີ້ໃນຄຳເທດສະໜາ ແລະ ໃນໜັງສືພິມ? ພວກເຮົາມີຄວາມຜິດແບບໃດ ທີ່ພວກທ່ານຮູ້ສຶກວ່າການຂັບໄລ່ພວກເຮົາ [ຄືພວກແອັດເວັນຕິສ] ອອກຈາກຄຣິສຕະຈັກ ແລະ ຈາກກຸ່ມນະມັດສະການຂອງທ່ານເປັນສິ່ງທີ່ຖືກຕ້ອງ?” “ຖ້າພວກເຮົາຜິດແທ້ ກໍຂໍຈົ່ງຊ່ວຍສະແດງໃຫ້ພວກເຮົາເຫັນວ່າມັນຜິດຢູ່ໃສ. ສະແດງໃຫ້ພວກເຮົາເຫັນຈາກພຣະຄຳຂອງພຣະເຈົ້າວ່າ ເຮົາເຊື່ອຄວາມເທັດຢູ່ປະການໃດແດ່; ການເຍາະເຍີ້ຍບໍ່ສາມາດໂນ້ມນ້າວພວກເຮົາໄດ້ດອກ, ພວກເຮົາໄດ້ຮັບການເຍາະເຍີ້ຍພຽງພໍແລ້ວ ມີແຕ່ພຣະຄຳຂອງພຣະເຈົ້າເທົ່ານັ້ນ ທີ່ສາມາດປ່ຽນຄວາມຄິດເຫັນຂອງພວກເຮົາໄດ້. ພວກເຮົາໄດ້ພິຈາລະນາຫຼັກຖານໃນພຣະຄຳພີດ້ວຍຄວາມຕັ້ງໃຈ ແລະ ການອະທິຖານ ຈຶ່ງມາເຖິງຂໍ້ສະຫຼຸບຂອງພວກເຮົາ.”[34] {GC 337.2}

ໃນແຕ່ລະຍຸກສະໄໝ ພຣະເຈົ້າຊົງຕັກເຕືອນຊາວໂລກຜ່ານຜູ້ຮັບໃຊ້ຂອງພຣະອົງ ແຕ່ຜູ້ຮັບໃຊ້ເຫຼົ່ານັ້ນພັດຖືກຄົນອື່ນສົງໄສ ແລະ ບໍ່ເຊື່ອ. ເມື່ອມະນຸດໃນສະໄໝກ່ອນນ້ຳຖ້ວມໂລກ ໄດ້ເຮັດຄວາມຊົ່ວຊ້າຈົນພຣະເຈົ້າຊົງບັນດານໃຫ້ນ້ຳມາຖ້ວມໂລກ, ພຣະອົງຊົງເຕືອນກ່ອນ ໃຫ້ພວກເຂົາຮູ້ເຖິງພຣະປະສົງຂອງພຣະອົງ ແລະ ມີໂອກາດຫັນຈາກທາງຊົ່ວຮ້າຍຂອງຕົນ. ສຽງການຕັກເຕືອນນັ້ນກ້ອງຢູ່ໃນຫູຂອງພວກເຂົາເປັນເວລາ 120 ປີ ຂໍໃຫ້ພວກເຂົາກັບໃຈ ກ່ອນພຣະພິໂຣດຂອງພຣະເຈົ້າຈະທຳລາຍພວກເຂົາ. ແຕ່ເຂົາທັງຫຼາຍພັດເຫັນວ່າ ຄຳເຕືອນນັ້ນເປັນພຽງນິຍາຍຈຶ່ງບໍ່ເຊື່ອ ແລະ ຍິ່ງມີຄວາມໜ້າດ້ານໃນການເຮັດຊົ່ວ. ພວກເຂົາເຍາະເຍີ້ຍຜູ້ຮັບໃຊ້ຂອງພຣະເຈົ້າ ແລະ ດູຖູກຄຳຂໍຮ້ອງຂອງເພິ່ນ, ແຖມຍັງຫາວ່າເພິ່ນເປັນຄົນປະໝາດ, ເພາະວ່າຊາຍຄົນໜຶ່ງຈະບັງອາດຢືນຂຶ້ນຕໍ່ຕ້ານບຸກຄົນສຳຄັນທັງຫຼາຍຂອງໂລກໄດ້ແນວໃດ? ຖ້າຄຳປະກາດຂອງໂນອາເປັນຄວາມຈິງ ເປັນຫຍັງມະນຸດທຸກຄົນຈຶ່ງບໍ່ເຫັນ ແລະ ຮັບເຊື່ອ? ຂໍ້ຄິດຂອງຊາຍຄົນໜຶ່ງຕໍ່ສະຕິປັນຍາຂອງຄົນນັບໝື່ນນັບແສນ! ພວກເຂົາຈຶ່ງບໍ່ຍອມຮັບຄຳເຕືອນ ແລະ ບໍ່ຍອມເຂົ້າລີ້ໄພຢູ່ໃນເຮືອ. {GC 337.3}

ຜູ້ທີ່ເຍາະເຍີ້ຍເຫຼົ່ານັ້ນ ໄດ້ຊື່ໄປຍັງທຳມະຊາດໃຫ້ເບິ່ງລະດູການທີ່ຜ່ານໄປຕາມປົກກະຕິຂອງມັນ, ຟ້າສີຄາມສົດໃສທີ່ບໍ່ເຄີຍມີຝົນຕົກຈັກເທື່ອ ແລະ ທົ່ງຫຍ້າຂຽວອຸ່ມທຸ່ມທີ່ຮັບການຫົດນ້ຳຈາກນ້ຳໝອກໃນກາງຄືນ, ແລ້ວຈຶ່ງຮ້ອງອອກມາວ່າ: “ລາວເວົ້າເປັນຄຳອຸປະມາບໍ່ແມ່ນບໍ?” ພວກເຂົາກຽດຊັງຜູ້ປະກາດແຫ່ງຄວາມຊອບທຳ ແລະ ຫາວ່າເພິ່ນເປັນກະຕ່າຍຕື່ນຕູມ; ຈາກນັ້ນພວກເຂົາກໍຍິ່ງສະແຫວງຫາຂອງບັນເທີງ ແລະ ຍິ່ງຕັ້ງໃຈເຮັດຊົ່ວຫຼາຍກວ່າເກົ່າ. ແຕ່ການທີ່ພວກເຂົາບໍ່ເຊື່ອບໍ່ສາມາດຂັດຂວາງເຫດການ

[34] *ອ້າງອີງຈາກທີ່ດຽວກັນ*, ໜ້າ 250, 252.

ທີ່ທຳນວາຍໄວ້. ພຣະເຈົ້າຊົງອົດທົນຕໍ່ຄວາມຊົ່ວຮ້າຍຂອງພວກເຂົາເປັນເວລາດົນນານ ແລະ ໃຫ້ໂອກາດພຽງພໍທີ່ຈະກັບໃຈ; ແຕ່ເມື່ອເຖິງເວລາທີ່ກຳນົດ ການພິພາກສາລົງໂທດກໍຕົກໃສ່ຄົນເຫຼົ່ານັ້ນທີ່ປະຕິເສດພຣະເມດຕາຂອງພຣະອົງ. *{GC 338.1}*

ຊົງທຳນວາຍວ່າຈະມີຄົນເຍາะເຍີ້ຍ

ພຣະຄຣິສຊົງກ່າວວ່າ ຈະມີຄົນບໍ່ເຊື່ອເລື່ອງການສະເດັດກັບມາຂອງພຣະອົງ ຄ້າຍຄືກັບໃນສະໄໝຂອງໂນອາ. ພຣະຜູ້ຊ່ວຍໃຫ້ລອດຊົງກ່າວວ່າ, ຄົນໃນສະໄໝໂນອາບໍ່ຮູ້ເລີຍຈົນກວ່ານ້ຳຖ້ວມມາກວາດພວກເຂົາໄປແລ້ວສັນໃດ “ເມື່ອບຸດມະນຸດມາ ກໍຈະເປັນດັ່ງນັ້ນແຫຼະ.” (ມັດທາຍ 24:39). ເມື່ອຄົນທີ່ໄດ້ນາມຊື່ວ່າເປັນຄົນຂອງພຣະເຈົ້າ ແຕ່ພັດຮ່ວມເປັນໜຶ່ງດຽວກັບຊາວໂລກ, ໃຊ້ຊີວິດຢ່າງຊາວໂລກ ແລະ ຫາຄວາມບັນເທີງຈາກສິ່ງທີ່ພຣະເຈົ້າຊົງຫ້າມ; ເມື່ອຄຣິສຕະຈັກໄປຮຽນແບບຄວາມຫຼູຫຼາຟຸ່ມເຟືອຍຂອງທາງຊາວໂລກ; ເມື່ອສຽງລະຄັງດັງໂຄງເຄງເພື່ອສະຫຼອງການແຕ່ງງານ ແລະ ຄົນທັ້ງຫຼາຍກຳລັງເບິ່ງອອກໄປໃນອະນາຄົດອັນໄກວ່າ ຈະມີຄວາມຈະເລີນຮຸ່ງເຮືອງໃນໂລກອີກຫຼາຍປີ; ເມື່ອນັ້ນແຫຼະ, ພາບອັນແສງສີອັນສົດໃສ ແລະ ຄວາມຫວັງອັນຫຼອກລວງ ຈະດັບສູນຢ່າງກະທັນຫັນເໝືອນຟ້າແມບຟ້າຜ່າ. *{GC 338.2}*

ພຣະເຈົ້າສົ່ງຜູ້ຮັບໃຊ້ຂອງພຣະອົງທີ່ຊົງເລືອກໄວ້ ເພື່ອປະກາດເຕືອນວ່າການພິພາກສາຄັ້ງສຸດທ້າຍໃກ້ເຂົ້າມາ ເໝືອນດັ່ງທີ່ພຣະອົງຊົງໃຊ້ໂນອາໃຫ້ເຕືອນຊາວໂລກເລື່ອງນ້ຳຖ້ວມ. ຄົນໃນສະໄໝຂອງໂນອາໄດ້ຫົວຂວັນຄຳທຳນວາຍຂອງເພິ່ນ ທີ່ປະກາດເລື່ອງຄວາມຊອບທຳຢ່າງໃດ ມີຫຼາຍຄົນໃນສະໄໝຂອງມິນເລີ ລວມເຖິງຄົນທີ່ມີຊື່ວ່າເປັນຄົນຂອງພຣະເຈົ້າບາງຄົນ ທີ່ຫົວຂວັນຄຳຕັກເຕືອນຂອງເພິ່ນຢ່າງນັ້ນ. *{GC 339.1}*

ເປັນຫຍັງຄຣິສຕະຈັກທັງຫຼາຍຈຶ່ງບໍ່ຕ້ອນຮັບຄຳສອນ ແລະ ຄຳເທດສະໜາເລື່ອງການສະເດັດມາຄັ້ງທີສອງຂອງພຣະຄຣິສ? ສຳລັບຄົນຊົ່ວ ການສະເດັດກັບມາຂອງພຣະອົງເປັນເລື່ອງຂອງຄວາມທຸກ ແລະ ຄວາມພິນາດ; ແຕ່ສຳລັບຄົນຊອບທຳມັນເປັນເລື່ອງແຫ່ງຄວາມຫວັງ ແລະ ຄວາມຊົ່ນຊື່ນຍິນດີ. ຄົນສັດຊື່ຂອງພຣະເຈົ້າໃນທຸກຍຸກທຸກສະໄໝໄດ້ໝູນໃຈກັນແລະກັນດ້ວຍຄວາມຈິງອັນສຳຄັນເລື່ອງການສະເດັດກັບມາຂອງພຣະເຢຊູ. ແລ້ວເປັນຫຍັງຄົນທີ່ໄດ້ຊື່ວ່າເປັນຄົນຂອງພຣະເຈົ້າຈຶ່ງຖືວ່າເລື່ອງດັ່ງກ່າວ “ເປັນດັ່ງຫີນທີ່ໃຫ້ປະຊາຊົນຕຳສະດຸດ ແລະ ເປັນດັ່ງແຮ້ວທີ່ຈະດັກຈັບເອົາ”[35] ເໝືອນຄົນຢິວທີ່ປະຕິເສດພຣະເຢຊູ? ແມ່ນອົງພຣະຜູ້ເປັນເຈົ້າເອງທີ່ຊົງສັນຍາກັບພວກສາວົກຂອງພຣະອົງວ່າ: “ເມື່ອເຮົາໄປຈັດຕຽມບ່ອນໄວ້ສຳລັບພວກເຈົ້າແລ້ວ ເຮົາຈະກັບຄືນມາຮັບເອົາພວກເຈົ້າໄປຢູ່ກັບເຮົາ.” (ໂຢຮັນ 14:3). ແມ່ນພຣະຜູ້ຊ່ວຍໃຫ້ລອດເອງທີ່ແສນເມດຕາ ຜູ້ຊົງເຫັນວ່າຜູ້ຕິດຕາມພຣະອົງຈະຮູ້ສຶກເປົ່າປ່ຽວດຽວດາຍ ແລະ ມີຄວາມໂສກເສົ້າ, ພຣະອົງຈຶ່ງຊົງໃຊ້ທູດສະຫວັນມາເພື່ອປອບໂຍນພວກເຂົາ ໂດຍຢືນຢັນວ່າພຣະອົງຈະສະເດັດກັບມາອີກ ເໝືອນດັ່ງທີ່ພຣະອົງສະເດັດຂຶ້ນໄປສະຫວັນ. ໃນຂະນະທີ່ພວກສາວົກຢືນຈ້ອງເບິ່ງໄປໃນທ້ອງຟ້າ ເພື່ອຈະໄດ້ເຫັນພຣະອົງຜູ້ທີ່ພວກເຂົາຮັກອີກເປັນຄັ້ງສຸດທ້າຍ ກໍຕົກໃຈເມື່ອໄດ້ຍິນສຽງກ່າວວ່າ: “ຊາວຄາລີເລເອີຍ, ເປັນຫຍັງພວກເຈົ້າຈຶ່ງຢືນເບິ່ງທ້ອງຟ້າ? ພຣະເຢຊູເຈົ້າອົງນີ້ທີ່ຖືກຮັບໄປຈາກພວກເຈົ້າຂຶ້ນສູ່ສະຫວັນແລ້ວ ພຣະອົງຈະມາປາກົດຢ່າງທີ່ພວກເຈົ້າໄດ້ເຫັນພຣະອົງຂຶ້ນສູ່ສະຫວັນນັ້ນແຫຼະ.” (ກິດຈະການ 1:11). ພວກເຂົາມີຄວາມຫວັງຂຶ້ນໃໝ່ເມື່ອໄດ້ຍິນຄຳຂອງທູດສະຫວັນ; ພວກສາວົກຈຶ່ງ “ກັບຄືນເມືອນະຄອນເຢຣູຊາເລັມດ້ວຍ

[35] ເອຊາຢາ 8:14.

ຄວາມຊົມຊື່ນຍິນດີອັນໃຫຍ່. ພວກເພິ່ນໄດ້ສືບຕໍ່ຢູ່ໃນບໍລິເວນພຣະວິຫານທຸກວັນ ເພື່ອສັນລະເສີນ ແລະ ໂມທະນາຂອບພຣະຄຸນພຣະເຈົ້າ." (ລູກາ 24:52, 53). ເຂົາທັງຫຼາຍບໍ່ໄດ້ຊື່ນຊົມຍິນດີຍ້ອນພຣະເຢຊູ ໄດ້ຖືກແຍກອອກຈາກພວກເຂົາ ແລະ ພວກເຂົາຖືກປະໄວ້ໃຫ້ດິ້ນຮົນກັບການທົດລອງ ແລະ ການ ລໍ້ລວງທາງຝ່າຍໂລກ, ແຕ່ພວກສາວົກເຫຼົ່ານັ້ນມີຄວາມຊົມຊື່ນຍິນດີ ຍ້ອນຄຳຢືນຢັນຂອງທູດສະຫວັນທີ່ ວ່າ ພຣະອົງຈະສະເດັດກັບມາອີກ. *{GC 339.2}*

ການປະກາດຂ່າວເລື່ອງການສະເດັດມາຂອງພຣະຄຣິສໃນເວລານີ້ ຄວນເປັນເລື່ອງທີ່ໜ້າຍິນດີ ເໝືອນໃນຕອນທີ່ພວກທູດສະຫວັນປະກາດຂ່າວນັ້ນໃຫ້ພວກຜູ້ລ້ຽງແກະໃນເມືອງເບັດເລເຮັມ. ຜູ້ທີ່ຮັກ ພຣະຜູ້ຊ່ວຍໃຫ້ລອດຢ່າງແທ້ຈິງ ຈະມີຄວາມໜ້າຊື່ນໃຈບານ ເມື່ອຄິດເຖິງການສະເດັດກັບມາຂອງ ພຣະອົງ ຜູ້ເປັນສູນກາງແຫ່ງຄວາມຫວັງໃນຊີວິດນິຣັນຂອງພວກເຂົາ; ຂ່າວເລື່ອງການສະເດັດມານີ້ ມີພື້ນຖານມາຈາກພຣະຄຳພີ. ເມື່ອພຣະອົງສະເດັດມາເປັນຄັ້ງທີສອງ ພຣະອົງຈະບໍ່ຮັບການດູຖູກ ດູໝິ່ນ ຫຼື ຖືກປະຕິເສດເໝືອນຕອນທີ່ພຣະອົງສະເດັດມາຄັ້ງທຳອິດ, ແຕ່ພຣະອົງຈະສະເດັດມາດ້ວຍ ຣິດທານຸພາບ ແລະ ດ້ວຍແສງຣັດສະໝີ ເພື່ອຮັບເອົາຄົນຂອງພຣະອົງ. ມີແຕ່ຄົນທີ່ບໍ່ຮັກພຣະເຢຊູທີ່ ບໍ່ຢາກໃຫ້ພຣະອົງສະເດັດກັບມາ; ຄວາມຄຽດແຄ້ນ ແລະ ຄວາມໃຈຮ້າຍທີ່ຄົນໃນຄຣິສຕະຈັກຕ່າງໆ ມີເມື່ອໄດ້ຍິນຂ່າວສານຈາກສະຫວັນ ເປັນຫຼັກຖານທີ່ແຈ່ມແຈ້ງທີ່ສຸດວ່າ ຄຣິສຕະຈັກເຫຼົ່ານັ້ນໄດ້ປະຖິ້ມ ພຣະເຈົ້າ. *{GC 339.3}*

ຜູ້ທີ່ຮັບເອົາຄຳສອນເລື່ອງການສະເດັດກັບມາ ກໍຮູ້ສຶກວ່າຕົນຕ້ອງການຖິ້ມໃຈເກົ່າເອົາໃຈໃໝ່ ແລະ ຖ່ອມໃຈລົງຕໍ່ພຣະພັກພຣະເຈົ້າ. ມີຫຼາຍຄົນທີ່ມີສອງຈິດສອງໃຈ ລະຫວ່າງພຣະຄຣິສກັບທາງຝ່າຍ ໂລກເປັນເວລາດົນນານ; ມາບັດນີ້, ພວກເຂົາຮູ້ສຶກວ່າເຖິງເວລາທີ່ຕ້ອງຕັດສິນໃຈ. "ສິ່ງທີ່ກ່ຽວຂ້ອງ ກັບຊີວິດນິຣັນ ໄດ້ກາຍເປັນຄວາມຈິງທີ່ຊັດເຈນທີ່ສຸດຢ່າງທີ່ບໍ່ເຄີຍສຳຜັດມາກ່ອນ, ເໝືອນສະຫວັນ ຫຍັບເຂົ້າມາໃກ້ໂລກສັນໃດກໍສັນນັ້ນ; ພວກເຂົາຮູ້ສຳນຶກວ່າ ຕົນຢືນຢູ່ຕໍ່ໜ້າພຣະພັກຂອງພຣະເຈົ້າໃນ ຖານະຄົນຜິດບາບ."[36] ຊາວຄຣິສຕຽນໄດ້ຮັບການຟື້ນຟູສູ່ຊີວິດໃໝ່ຝ່າຍຈິດວິນຍານ, ພວກເຂົາຮູ້ສຶກ ວ່າ ເຫຼືອເວລາສັ້ນໆເທົ່ານັ້ນ; ສະນັ້ນ, ຖ້າຈະເຮັດຫຍັງເພື່ອຊ່ວຍເຫຼືອເພື່ອນມະນຸດດ້ວຍກັນ ກໍຕ້ອງ ຟ້າວເຮັດຢ່າງຮີບດ່ວນ. ສິ່ງຂອງຝ່າຍໂລກຈືດຈາງໄປ, ປະເດັນທີ່ຈັບໃຈພວກເຂົາເໜືອສິ່ງໃດທັງໝົດ ກໍຄື ພວກເຂົາຈະມີຊີວິດນິຣັນ ຫຼືວ່າຈະຕ້ອງຕາຍໄປຕະຫຼອດການ. ພຣະວິນຍານຂອງພຣະເຈົ້າສະຖິດ ຢູ່ກັບພວກເຂົາ ແລະ ປະທານພະລັງຣິດເດດໃຫ້ພວກເຂົາໃນການຕັກເຕືອນຂໍຮ້ອງຜີບ້ອງ ແລະ ຄົນ ບາບໃຫ້ກຽມຕົວສຳລັບວັນສຳຄັນຍິ່ງໃຫຍ່ຂອງພຣະເຈົ້າ. ການດຳເນີນຊີວິດປະຈຳວັນຂອງພວກເຂົາ ເປັນ ພະຍານອັນມີຄຸນຢູ່ຕະຫຼອດເວລາ ເຊິ່ງປະນາມສະມາຊິກຄຣິສຕະຈັກທີ່ເນັ້ນພິທີກຳແຕ່ບໍ່ກັບໃຈ. ຄົນ ເຫຼົ່ານັ້ນບໍ່ຢາກມີຫຍັງມາຂັດຈັງຫວະການຫາຄວາມບັນເທີງ, ການສະແຫວງຫາເງິນຄຳ ແລະ ຄວາມ ທະເຍີທະຍານຫາລາບຍົດໃນໂລກນີ້. ດ້ວຍເຫດນີ້, ຈຶ່ງມີຄົນຕໍ່ຕ້ານຄຳສອນເລື່ອງການສະເດັດກັບມາ ຂອງພຣະຄຣິສ ແລະ ຜູ້ທີ່ປະກາດຄຳສອນນັ້ນ. *{GC 340.1}*

ໃນເມື່ອຫຼັກຖານທີ່ກ່ຽວຂ້ອງກັບໄລຍະເວລາແຫ່ງຄຳພະຍາກອນມີຄວາມໜັກແໜ້ນໝັ້ນຄົງ, ຄົນທີ່ ຕໍ່ຕ້ານຈຶ່ງພະຍາຍາມຂັດຂວາງບໍ່ໃຫ້ຄົນມາຄົ້ນຄວ້າເລື່ອງນີ້ ໂດຍກ່າວວ່າ, ຄຳພະຍາກອນຖືກຜະໜຶກ ຕາປິດໄວ້. ຢ່າງນີ້ແຫຼະ, ພວກໂປຣແຕັສຕັງຈຶ່ງຈະເລີນຮອຍຕາມຄຣິສຕະຈັກໂຣມ, ເພາະຄຣິສຕະຈັກ ໃນລະບອບສັນຕະປາປາເຄີຍຫ້າມສະມາຊິກອ່ານພຣະຄຳພີ ແລະ ຄຣິສຕະຈັກນິກາຍໂປຣແຕັສຕັງ ກໍ

[36] ບ໊ຶສ, ໜ້າ 146.

ອ້າງວ່າມີສ່ວນສຳຄັນຂອງພຣະຄຳພີທີ່ບໍ່ສາມາດເຂົ້າໃຈໄດ້ ຄືສ່ວນທີ່ກ່າວເຖິງຄວາມຈິງທີ່ກ່ຽວຂ້ອງກັບຍຸກສະໄໝຂອງພວກເຮົານັ້ນເອງ. {GC 340.2}

ຄວາມສຳຄັນຂອງພຣະທຳດານີເອນ ແລະ ພຣະນິມິດ

ພວກສາສະໜາຈານ ແລະ ປະຊາຊົນພາກັນປະກາດວ່າ ຄຳພະຍາກອນຂອງດານີເອນ ແລະ ພຣະນິມິດເປັນສິ່ງເລິກລັບທີ່ບໍ່ສາມາດເຂົ້າໃຈໄດ້. ແຕ່ພຣະຄຣິສຊົງຊີ້ໃຫ້ພວກສາວົກເບິ່ງຖ້ອຍຄຳຂອງຜູ້ເຜີຍພຣະທຳດານີເອນ ກ່ຽວກັບເຫດການທີ່ຈະເກີດຂຶ້ນໃນສະໄໝຂອງພວກເຂົາເອງວ່າ: "ໃຫ້ຜູ້ອ່ານ*ເຂົ້າໃຈ*ເອງ." (ມັດທາຍ 24:15). ສ່ວນຄຳສອນທີ່ບອກວ່າ ພຣະທຳພຣະນິມິດເປັນສິ່ງເລິກລັບທີ່ເຂົ້າໃຈບໍ່ໄດ້ ກໍບໍ່ເປັນຄວາມຈິງ; ເພາະວ່າຊື່ພຣະທຳເຫຼັ້ມນີ້ໃນພາສາເດີມແປວ່າ "ການເປີດເຜີຍ" ຫຼື ວ່າ "ການສຳແດງ" ເຊິ່ງຈະເຫັນໄດ້ຈາກຂໍ້ທຳອິດຂອງພຣະທຳດັ່ງກ່າວ. "ການຊົງສຳແດງຂອງພຣະເຢຊູເຈົ້າ ເຊິ່ງພຣະເຈົ້າໄດ້ຊົງປະທານແກ່ພຣະອົງ ເພື່ອຊົງຊີ້ແຈງໃຫ້ບັນດາຜູ້ຮັບໃຊ້ຂອງພຣະອົງຮູ້ເຖິງເຫດການທັງຫຼາຍທີ່ຕ້ອງບັງເກີດຂຶ້ນໃນບໍ່ຊ້ານີ້. . . .*ຄວາມສຸກເປັນຂອງຜູ້ທີ່ອ່ານ*ພຣະທຳເຫຼັ້ມນີ້ ແລະ ຄວາມສຸກເປັນຂອງ*ຜູ້ທີ່ຮັບຟັງ*ຖ້ອຍຄຳແຫ່ງຄຳທຳນວາຍ ແລະ *ປະຕິບັດຕາມ*ຂໍ້ຄວາມທີ່ມີຄຳຂຽນໄວ້ໃນພຣະທຳເຫຼັ້ມນີ້. ດ້ວຍວ່າ, ເວລານັ້ນກໍໃກ້ເຂົ້າມາແລ້ວ ເມື່ອເຫດການເຫຼົ່ານີ້ຈະເກີດຂຶ້ນ." (ພຣະນິມິດ 1:1–3). {GC 341.1}

ຜູ້ເຜີຍພຣະທຳໂຢຮັນກ່າວວ່າ: "ຄວາມສຸກເປັນຂອງຜູ້ທີ່ອ່ານພຣະທຳເຫຼັ້ມນີ້;" ພຣະພອນດັ່ງກ່າວບໍ່ແມ່ນສຳລັບຄົນທີ່ບໍ່ຍອມອ່ານ. ເພີ່ນຍັງກ່າວອີກວ່າ: "ຄວາມສຸກເປັນຂອງຜູ້ທີ່ຮັບຟັງ;" ມີບາງຄົນປະຕິເສດທີ່ຈະຮັບຟັງສິ່ງໃດທີ່ກ່ຽວຂ້ອງກັບຄຳພະຍາກອນ, ພຣະພອນດັ່ງກ່າວກໍບໍ່ແມ່ນສຳລັບຄົນກຸ່ມນີ້. "ແລະປະຕິບັດຕາມຂໍ້ຄວາມທີ່ມີຄຳຂຽນໄວ້ໃນພຣະທຳເຫຼັ້ມນີ້;" ມີຫຼາຍຄົນບໍ່ຍອມເອົາໃຈໃສ່ຕໍ່ຄຳຕັກເຕືອນ ແລະ ຄຳສັ່ງສອນທີ່ມີຢູ່ໃນພຣະທຳພຣະນິມິດ; ຄົນເຫຼົ່ານີ້ກໍບໍ່ສາມາດອ້າງສິດໃນການຮັບພຣະພອນທີ່ຊົງສັນຍາໄວ້. ທຸກຄົນທີ່ເຍາะເຍີ້ຍປະເດັນຕ່າງ ໆ ຂອງຄຳພະຍາກອນ ແລະ ຫົວຂວັນໃສ່ສັນຍະລັກຕ່າງ ໆ ທີ່ໃຊ້ໃນການທຳນວາຍ ພ້ອມດ້ວຍທຸກຄົນທີ່ບໍ່ຍອມປ່ຽນແປງຊີວິດ ແລະ ກຽມພ້ອມສຳລັບການສະເດັດມາຂອງບຸດມະນຸດ ລ້ວນແຕ່ຈະບໍ່ໄດ້ຮັບພອນ. {GC 341.2}

ເມື່ອມີຂໍ້ພຣະຄຳພີຂຽນໄວ້ເຊັ່ນນີ້ແລ້ວ ເປັນໄປໄດ້ຢ່າງໃດທີ່ຈະມີຄົນກ້າສອນວ່າ ພຣະທຳພຣະນິມິດເປັນໜັງສືເລິກລັບເກີນທີ່ມະນຸດຈະເຂົ້າໃຈ. ພຣະທຳດັ່ງກ່າວເປັນຄວາມເລິກລັບທີ່ເປີດເຜີຍ ແລະ ເປັນໜັງສືທີ່ເປີດອອກ. ການສຶກສາພຣະທຳພຣະນິມິດຈະນຳໄປສູ່ການສຶກສາພຣະທຳດານີເອນ, ເພາະທັງສອງເຫຼັ້ມນີ້ມີຄຳສອນທີ່ສຳຄັນທີ່ສຸດທີ່ພຣະເຈົ້າປະທານໃຫ້ມະນຸດ ກ່ຽວກັບເຫດການທີ່ຈະເກີດຂຶ້ນໃນຊ່ວງສຸດທ້າຍຂອງປະຫວັດສາດໂລກ. {GC 341.3}

ພຣະເຈົ້າຊົງເປີດເຜີຍໃຫ້ໂຢຮັນໄດ້ເຫັນນິມິດເຖິງປະສົບການອັນສຳຄັນ ແລະ ໜ້າສົນໃຈຕ່າງ ໆ ຂອງຄຣິສຕະຈັກ. ເພິ່ນໄດ້ເຫັນສະພາບໄພ່ພົນຂອງພຣະເຈົ້າ ທັງໄພອັນຕະລາຍທີ່ຕ້ອງປະເຊີນ, ຄວາມຂັດແຍ້ງຕ່າງ ໆ ແລະ ການປົດປ່ອຍທີ່ຈະໄດ້ຮັບໃນທີ່ສຸດ. ເພິ່ນໄດ້ບັນທຶກຂ່າວສານທີ່ຈະຊ່ວຍໃຫ້ມະນຸດມີຄວາມພ້ອມສຳລັບການເກັບກ່ຽວໃນຍຸກສຸດທ້າຍ, ບາງຄົນກໍຈະເປັນດັ່ງຮວງເຂົ້າ ແລະ ຈະໄດ້ຮັບການກ່ຽວເກັບເຂົ້າໄປໃນແຜ່ນດິນສະຫວັນ; ສ່ວນຄົນອື່ນກໍຈະເປັນດັ່ງໄມ້ຝືນທີ່ຈະຖືກເຜົາໄໝ້ໄປຈົນໝົດສິ້ນ. ພຣະເຈົ້າຊົງເປີດເຜີຍໃຫ້ເພິ່ນເຫັນປະເດັນຕ່າງ ໆ ທີ່ສຳຄັນຫຼາຍສຳລັບຄຣິສຕະຈັກໃນຍຸກສຸດທ້າຍໂດຍສະເພາະ ເພື່ອວ່າຜູ້ທີ່ຈະຫັນຈາກຄວາມຜິດໄປສູ່ຄວາມຈິງຈະໄດ້ຮັບຄຳແນະນຳກ່ຽວກັບ

ໄພອັນຕະລາຍ ແລະ ການຂັດແຍ້ງທີ່ຢູ່ຕໍ່ໜ້າພວກເຂົາ. ບໍ່ຈຳເປັນໃຫ້ຜູ້ໃດມຶນງົງສົງໄສຕໍ່ເຫດການຕ່າງ ໆ ທີ່ກຳລັງຈະເກີດຂຶ້ນເທິງແຜ່ນດິນໂລກ. *{GC 341.4}*

ແລ້ວເປັນຫຍັງຄົນສ່ວນຫຼາຍບໍ່ຮູ້ພຣະທຳພຣະນິມິດ ອັນເປັນຂໍ້ຄວາມສຳຄັນຂອງພຣະຄຳພີ? ເປັນຫຍັງຄົນທົ່ວໄປບໍ່ຢາກຄົ້ນຄວ້າພຣະທຳດັ່ງກ່າວ? ເປັນເພາະມານຊາຕານສຶກສາຢ່າງດຸໝັ່ນຂະຫຍັນພຽນ ເພື່ອຫາທາງປິດບັງສິ່ງທີ່ຈະເປີດເຜີຍການຫຼອກລວງຂອງມັນ ບໍ່ໃຫ້ມະນຸດເຫັນ. ດ້ວຍເຫດນີ້, ພຣະຄຣິສຜູ້ຊົງໃຫ້ນິມິດແກ່ໂຢຮັນນັ້ນ ຊົງເຫັນລ່ວງໜ້າເຖິງການຕໍ່ຕ້ານທີ່ຈະເກີດຂຶ້ນກັບຜູ້ທີ່ສຶກສາພຣະທຳພຣະນິມິດ, ພຣະອົງຈຶ່ງກ່າວຄຳອວຍພອນໃຫ້ແກ່ທຸກຄົນທີ່ອ່ານ, ຮັບຟັງ ແລະ ປະຕິບັດຕາມຖ້ອຍຄຳແຫ່ງຄຳພະຍາກອນດັ່ງກ່າວ. *{GC 342.1}*

ຫຼັງຈາກການຟື້ນພຣະຊົນ ພຣະເຢຊູໄດ້ປາກົດຕໍ່ພວກສາວົກຂອງພຣະອົງ ເມື່ອເດີນທາງໄປຍັງ
ເມືອງເອມາອູດ; “ແລ້ວພຣະອົງຈຶ່ງຊົງອະທິບາຍພຣະຄຳພີທຸກຕອນ ທີ່ກ່າວເຖິງເລື່ອງ
ພຣະອົງສູ່ພວກເພິ່ນຟັງ ຄືເລີ່ມແຕ່ໂມເຊ ຕະຫຼອດເຖິງພວກຜູ້ທຳນວາຍ.” (ລູກາ 24:27).

ເບິ່ງໜ້າ 280.

Image generated with AI (Google Gemini).

19

ແສງສະຫວ່າງທີ່ສ່ອງໃນຄວາມມືດ

ຄວາມເຂົ້າໃຈທີ່ຄ່ອຍ ໆ ເພີ່ມຂຶ້ນ

ວຽກງານຂອງພຣະເຈົ້າທີ່ປາກົດຢູ່ໃນຂະບວນການການປະຕິຮູບ ແລະ ການເຄື່ອນໄຫວທີ່ຍິ່ງໃຫຍ່ທາງສາສະໜາໃນຍຸກສະໄໝຕ່າງ ໆ ມີຄວາມຄ້າຍຄືກັນ; ຫຼັກການທີ່ພຣະເຈົ້າຊົງໃຊ້ໃນການປະຕິບັດຕໍ່ມະນຸດບໍ່ເຄີຍປ່ຽນແປງ. ການເຄື່ອນໄຫວຕ່າງ ໆ ທີ່ສຳຄັນໃນປັດຈຸບັນ ມີຄວາມຄ້າຍຄືກັນກັບຂະບວນ-ການຟື້ນຟູໃນອະດີດ; ດ້ວຍເຫດນີ້, ປະສົບການຂອງຄຣິສຕະຈັກໃນສະໄໝກ່ອນ ຈຶ່ງມີບົດຮຽນອັນລ້ຳຄ່າສຳລັບຍຸກສະໄໝຂອງພວກເຮົາ. *{GC 343.1}*

ຫຼັກຄວາມຈິງທີ່ແຈ່ມແຈ້ງທີ່ສຸດໃນພຣະຄຳພີກໍຄື: ພຣະເຈົ້າຊົງນຳພາຜູ້ຮັບໃຊ້ຂອງພຣະອົງໃນໂລກດ້ວຍພຣະວິນຍານບໍຣິສຸດ ເພື່ອໃຫ້ພວກເຂົາມີສ່ວນໃນການເຄື່ອນໄຫວອັນສຳຄັນ ຕາມແຜນການຊ່ວຍມະນຸດໃຫ້ລອດ. ມະນຸດເປັນເຄື່ອງມືໃນພຣະຫັດຂອງພຣະເຈົ້າ ເຊິ່ງພຣະອົງຊົງໃຊ້ຕາມພຣະປະສົງແຫ່ງພຣະຄຸນ ແລະ ພຣະເມດຕາຂອງພຣະອົງ. ແຕ່ລະຄົນມີສ່ວນໃນວຽກງານທີ່ຕ້ອງເຮັດ, ທຸກຄົນໄດ້ຮັບແສງສະຫວ່າງສ່ວນໜຶ່ງທີ່ເໝາະສົມກັບຄວາມຈຳເປັນໃນຍຸກສະໄໝຂອງຕົນ ແລະ ພຽງພໍທີ່ຈະໃຫ້ເຮັດວຽກງານທີ່ພຣະເຈົ້າຊົງມອບໝາຍໃຫ້. ແຕ່ບໍ່ວ່າຈະໄດ້ຮັບກຽດຈາກສະຫວັນພຽງໃດກໍຕາມ ບໍ່ມີຜູ້ໃດເຄີຍເຂົ້າໃຈແຜນການອັນຍິ່ງໃຫຍ່ແຫ່ງການໄຖ່ມະນຸດໃຫ້ລອດຢ່າງຄົບຖ້ວນ ຫຼື ແມ່ນແຕ່ຈະເຂົ້າໃຈພຣະປະສົງຂອງພຣະເຈົ້າ ສຳລັບວຽກງານໃນຍຸກສະໄໝຂອງຕົນເອງກໍຍັງຮູ້ບໍ່ຖ່ອງແທ້. ມະນຸດບໍ່ສາມາດເຂົ້າໃຈຢ່າງຄົບຖ້ວນ ເຖິງສິ່ງທີ່ພຣະເຈົ້າຈະເຮັດໃຫ້ສຳເລັດ ຜ່ານວຽກງານທີ່ພຣະອົງຊົງມອບໝາຍໃຫ້ຕົນ; ພວກເຂົາບໍ່ເຂົ້າໃຈຢ່າງລະອຽດ ເຖິງຂ່າວສານທີ່ຕົນປະກາດໃນພຣະນາມຂອງພຣະອົງ. *{GC 343.2}*

“ເຈົ້າຢັ່ງຮູ້ເຖິງຂອບເຂດ ແລະ ຄວາມຈຳກັດຄວາມຍິ່ງໃຫຍ່ ແລະ ຣິດອຳນາດຂອງພຣະເຈົ້າໄດ້ຫຼືບໍ່?” “ອົງພຣະຜູ້ເປັນເຈົ້າກ່າວວ່າ, ‘ຄວາມຄິດເຮົານັ້ນ ບໍ່ຄືຄວາມຄິດຂອງພວກເຈົ້າ ແລະ ວິຖີທາງ ຂອງເຮົານັ້ນກໍແຕກຕ່າງໃດ ບໍ່ຄືວິຖີທາງຂອງພວກເຈົ້າ. ຟ້າສະຫວັນສູງກວ່າແຜ່ນດິນໂລກສັນໃດ ວິຖີ ທາງທັ້ງຄວາມຄິດເຮົາກໍສູງກວ່າສັນນັ້ນ.’” “ເພາະແມ່ນເຮົາແຕ່ຜູ້ດຽວທີ່ເປັນພຣະເຈົ້າ. ຕັ້ງແຕ່ຕົ້ນ ເຮົາ ກ່າວໄວ້ກ່ອນເຖິງສິ່ງທີ່ຈະມີມາ ເຮົາໄດ້ບອກໄວ້ແຕ່ດົນນານໃນສິ່ງທີ່ຈະເກີດຂຶ້ນ.” (ໂຢບ 11:7; ເອຊາຢາ 55:8–9 LO2012; 46:9, 10). *{GC 343.3}*

ແມ່ນແຕ່ບັນດາຜູ້ເຜີຍພຣະທຳ ທີ່ໄດ້ຮັບແສງສະຫວ່າງພິເສດຈາກພຣະວິນຍານບໍຣິສຸດ ກໍຍັງບໍ່ເຂົ້າໃຈລະອຽດ ເຖິງຄວາມສຳຄັນຂອງສິ່ງທີ່ພຣະອົງຊົງເປີດເຜີຍໃຫ້ເຂົາທັງຫຼາຍ. ຄວາມເຂົ້າໃຈໃນສິ່ງເຫຼົ່ານັ້ນ ຄ່ອຍ ໆ ພັດທະນາຂຶ້ນໃນຍຸກສະໄໝຕ່າງ ໆ ຕາມທີ່ຄົນຂອງພຣະເຈົ້າຕ້ອງການຄຳສອນດັ່ງກ່າວ. *{GC 344.1}*

ເປໂຕຂຽນເຖິງຄວາມລອດທີ່ປາກົດຢູ່ໃນຂ່າວປະເສີດວ່າ: “ກ່ຽວກັບເລື່ອງຄວາມພົ້ນນີ້, ບັນດາຜູ້ທຳນວາຍຜູ້ທີ່ໄດ້ກ່າວເຖິງພຣະຄຸນທີ່ຈະມາເຖິງພວກເຈົ້ານັ້ນກໍໄດ້ຄົ້ນຄວ້າຢ່າງຕັ້ງໃຈ ແລະ ດ້ວຍຄວາມເອົາໃຈໃສ່ທີ່ສຸດ. ພວກເພິ່ນພະຍາຍາມຄົ້ນຫາວ່າສິ່ງທີ່ພຣະວິນຍານຂອງພຣະຄຣິສເຈົ້າທີ່ຢູ່ໃນພວກເພິ່ນໄດ້ບົ່ງໄວ້ນັ້ນຈະເກີດຂຶ້ນ*ເມື່ອໃດ* ແລະ ຈະເກີດຂຶ້ນ*ຢ່າງໃດ* ເມື່ອພຣະອົງໄດ້ທຳນວາຍເຖິງຄວາມທຸກທໍລະມານຂອງພຣະຄຣິສເຈົ້າ ແລະ ເຖິງສະຫງ່າຣາສີທີ່ຈະຕາມມານັ້ນ. ພວກເພິ່ນໄດ້ຮັບການເປີດເຜີຍວ່າສິ່ງຕ່າງ ໆ ທີ່ໄດ້ທຳນວາຍເຖິງນັ້ນ ບໍ່ແມ່ນເພື່ອເປັນການຮັບໃຊ້*ພວກເພິ່ນເອງ*ແຕ່ເພື່ອ*ພວກເຈົ້າ*.” (1 ເປໂຕ 1:10–12 LCV). *{GC 344.2}*

ເຖິງແມ່ນວ່າພຣະເຈົ້າບໍ່ໄດ້ໃຫ້ບັນດາຜູ້ເຜີຍພຣະທຳ ເຂົ້າໃຈຢ່າງລະອຽດກ່ຽວກັບສິ່ງທີ່ພຣະອົງຊົງເປີດເຜີຍໃຫ້ພວກເຂົາ, ແຕ່ຄົນເຫຼົ່ານີ້ມີຄວາມພະຍາຍາມຢ່າງຈິງຈັງ ທີ່ຈະຮັບຄວາມສະຫວ່າງທັງໝົດທີ່ພຣະເຈົ້າຊົງໂຜດສຳແດງໃຫ້ເຫັນ. ພວກເຂົາ “ໄດ້ຄົ້ນຄວ້າຢ່າງຕັ້ງໃຈ ແລະ ດ້ວຍຄວາມເອົາໃຈໃສ່ທີ່ສຸດ; . . . ຄົ້ນຫາວ່າສິ່ງທີ່ພຣະວິນຍານຂອງພຣະຄຣິສເຈົ້າທີ່ຢູ່ໃນພວກເພິ່ນໄດ້ບົ່ງໄວ້ນັ້ນຈະເກີດຂຶ້ນ*ເມື່ອໃດ* ແລະ ຈະເກີດຂຶ້ນ*ຢ່າງໃດ*.” ຂ່າງເປັນບົດຮຽນທີ່ສຳຄັນສຳລັບຄົນຂອງພຣະເຈົ້າຫຼັງສະໄໝຂອງພຣະ-ເຢຊູຄຣິສ ເພາະພຣະອົງປະທານຄຳພະຍາກອນເຫຼົ່ານີ້ໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງ ກໍເພື່ອປະໂຫຍດຂອງຄຣິສຕຽນນີ້ເອງ. “ພວກເພິ່ນໄດ້ຮັບການເປີດເຜີຍວ່າສິ່ງຕ່າງ ໆ ທີ່ໄດ້ທຳນວາຍເຖິງນັ້ນ ບໍ່ແມ່ນເພື່ອເປັນການຮັບໃຊ້ພວກເພິ່ນເອງແຕ່ເພື່ອພວກເຈົ້າ.” ຄົນເຫຼົ່ານັ້ນເປັນຜູ້ບໍຣິສຸດຂອງພຣະເຈົ້າ; ຈົ່ງສັງເກດວ່າພວກເຂົາ “ໄດ້ຄົ້ນຄວ້າຢ່າງຕັ້ງໃຈ ແລະ ດ້ວຍຄວາມເອົາໃຈໃສ່ທີ່ສຸດ” ກ່ຽວກັບສິ່ງທີ່ຊົງເປີດເຜີຍໃຫ້ພວກເຂົາ ເພື່ອປະໂຫຍດຂອງຄົນລຸ້ນໃໝ່ທີ່ຍັງບໍ່ທັນໄດ້ເກີດມາ. ໃຫ້ເຮົາລອງປຽບທຽບຄວາມກະຕືລືລົ້ນຂອງພວກເຂົາທີ່ມີຕໍ່ຂອງປະທານຈາກສະຫວັນກັບຄວາມເສີຍເມີຍຂອງຄົນທີ່ພຣະເຈົ້າຊົງໂຜດໃນຍຸກຫຼັງ ໆ ນີ້. ຂ່າງເປັນການຕິຕຽນຕໍ່ທ່າທີຂອງຄຣິສຕຽນໃນສະໄໝຂອງພວກເຮົາທີ່ຮັກຄວາມສະດວກສະບາຍ ແລະ ຫຼົງຮັກຝ່າຍໂລກ ທັງມີຄວາມພໍໃຈທີ່ຈະປະກາດວ່າ ຄຳພະຍາກອນບໍ່ສາມາດເຂົ້າໃຈໄດ້ເລີຍ! *{GC 344.3}*

ເຖິງແມ່ນວ່າຈິດໃຈຂອງມະນຸດມີຄວາມຈຳກັດ ຈົນບໍ່ສາມາດເຂົ້າເຖິງຄວາມຄິດຂອງພຣະເຈົ້າໄດ້ ແລະ ບໍ່ອາດເຂົ້າໃຈຢ່າງຖ່ອງແທ້ເຖິງພຣະປະສົງຂອງພຣະອົງ, ແຕ່ຫຼາຍເທື່ອ ສາເຫດທີ່ຄົນເຮົາບໍ່ເຂົ້າໃຈຂ່າວສານຈາກສະຫວັນດີເທົ່າທີ່ຄວນ ກໍຍ້ອນວ່າເຮົາມີຄວາມເຂົ້າໃຈຜິດເປັນພື້ນຖານຢູ່ແລ້ວ ຫຼື ວ່າເປັນເພາະພວກເຮົາໄດ້ລະເລີຍ ບໍ່ເອົາໃຈໃສ່ຕໍ່ບາງສິ່ງບາງຢ່າງ. ຈິດໃຈຂອງຜູ້ຄົນ ແລະ ແມ່ນແຕ່ຜູ້ຮັບໃຊ້ຂອງພຣະເຈົ້າມັກຖືກຄວາມຄິດເຫັນຂອງມະນຸດ, ທຳນຽມປະເພນີ ແລະ ຄຳສອນອັນເປັນຄວາມເທັດເຮັດໃຫ້ຕາບອດຢູ່ເລື້ອຍ ໆ ຈົນພວກເຂົາສາມາດເຂົ້າໃຈຂໍ້ລ້ຳເລີກທີ່ພຣະເຈົ້າຊົງສຳແດງໃນພຣະຄຳຂອງພຣະອົງພຽງເລັກໜ້ອຍ. ເຖິງແມ່ນວ່າພຣະຜູ້ຊ່ວຍໃຫ້ລອດຊົງຢູ່ກັບພວກສາວົກຂອງພຣະອົງແທ້ ໆ ແຕ່ພວກເຂົາກໍເຂົ້າໃຈພຣະຄຳຂອງພຣະອົງພຽງເລັກໜ້ອຍເຊັ່ນກັນ. ພວກເຂົາໄດ້ຄ້ອຍຕາມແນວຄິດຂອງຄົນທົ່ວໄປທີ່ວ່າ ພຣະເມຊີອາຈະສະເດັດມາຄອບຄອງໃນຖານະເຈົ້າແຜ່ນດິນ ແລະ ຈະຍົກຊົນຊາດອິດສະຣາເອນຂຶ້ນ ໃຫ້ປົກຄອງຢູ່ເໜືອຊົນຊາດທັງຫຼາຍໃນໂລກ; ສະນັ້ນ, ພວກເຂົາຈຶ່ງບໍ່ສາມາດເຂົ້າໃຈຖ້ອຍຄຳຂອງພຣະອົງທີ່ກ່າວລ່ວງໜ້າເຖິງຄວາມທຸກທໍລະມານ ແລະ ການສິ້ນພຣະຊົນຂອງພຣະອົງໄດ້. *{GC 344.4}*

ຄົບກຳນົດເວລາ

ພຣະຄຣິສໄດ້ສົ່ງພວກສາວົກອອກໄປດ້ວຍພຣະອົງເອງ ໃຫ້ປະກາດວ່າ: “ເວລາທີ່ໄດ້ກຳນົດໄວ້ມາເຖິງແລ້ວ ແລະ ຣາຊອານາຈັກຂອງພຣະເຈົ້າກໍມາໃກ້ແລ້ວ ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະ ເຊື່ອໃນຂ່າວປະເສີດ.” (ມາຣະໂກ 1:15). ຄຳປະກາດນີ້ແມ່ນອີງໃສ່ຄຳພະຍາກອນຂອງດານີເອນບົດທີ 9. ທູດສະຫວັນໄດ້ກ່າວວ່າ ມີ 69 ອາທິດ ແລ້ວຈະມາເຖິງ “ພຣະເມຊີອາຜູ້ເປັນປະມຸກ.” (ດານີເອນ 9:25 TKJV). ພວກສາວົກ ຈຶ່ງເຝົ້າຫວັງການສ້າງຕັ້ງອານາຈັກຂອງພຣະເມຊີອາໃນນະຄອນເຢຣູຊາເລັມ ດ້ວຍຄວາມຊົມຊື່ນຍິນດີ ເພາະເຊື່ອວ່າອານາຈັກນັ້ນຈະຄອບຄອງຈົນທົ່ວແຜ່ນດິນໂລກ. *{GC 345.1}*

ພວກເຂົາເທດສະໜາປະກາດຂ່າວສານທີ່ພຣະຄຣິສຊົງມອບໝາຍໃຫ້, ເຖິງແມ່ນວ່າພວກເຂົາເອງເຂົ້າໃຈຜິດໃນສິ່ງທີ່ຕົນປະກາດ. ການປະກາດຂອງພວກເຂົາອີງໃສ່ພຣະທຳດານີເອນ 9:25, ແຕ່ພວກສາວົກບໍ່ໄດ້ສັງເກດຖ້ອຍຄຳໃນຂໍ້ຖັດໄປທີ່ກ່າວວ່າ ພຣະເມຊີອາຈະຖືກຕັດອອກ.[1] ນັບຕັ້ງແຕ່ເກີດ ພວກສາວົກປັກໃຈລໍຖ້າອານາຈັກອັນຮຸ່ງເຮືອງທີ່ຈະຄອບຄອງແຜ່ນດິນໂລກ; ຄວາມຄາດຫວັງນີ້ໄດ້ເຮັດໃຫ້ພວກເຂົາຕາບອດ ຈົນບໍ່ສາມາດເຂົ້າໃຈໃນລາຍລະອຽດຂອງຄຳພະຍາກອນ ຫຼື ໃນຖ້ອຍຄຳຂອງພຣະຄຣິສໄດ້. *{GC 345.2}*

ພວກສາວົກຂອງພຣະເຢຊູໄດ້ປະຕິບັດຕາມໜ້າທີ່ ໃນການປະກາດຄຳເຊື້ອເຊີນແຫ່ງຄວາມເມດຕາແກ່ປະຊາຊົນຊາວຢິວ, ແຕ່ໃນເວລາທີ່ພວກເຂົາຄາດຫວັງວ່າຈະໄດ້ເຫັນພຣະອາຈານຂອງຕົນຂຶ້ນຄອບຄອງເໜືອບັນລັງຂອງດາວິດ ພວກເຂົາພັດໄດ້ເຫັນພຣະອົງຖືກຈັບໃນຂໍ້ຫາເປັນຜູ້ເຮັດຜິດ; ພຣະອົງຖືກຂ້ຽນຕີ, ຖືກໝິ່ນປະໝາດ, ຖືກກ່າວໂທດ ແລະ ຖືກຄຶງໄວ້ເທິງໄມ້ກາງແຂນແຫ່ງຄານວາຣີ. ວັນເວລາທີ່ອົງພຣະຜູ້ເປັນເຈົ້າຫຼັບຢູ່ໃນຫຼຸມຝັງສົບ ເປັນເວລາທີ່ເຈັບປວດ ແລະ ສິ້ນຫວັງທີ່ສຸດສຳລັບພວກສາວົກເຫຼົ່ານັ້ນ! *{GC 345.3}*

ພຣະຄຣິສສະເດັດມາຕາມເວລາ ແລະ ໃນລັກສະນະທີ່ກ່າວໄວ້ໃນຄຳພະຍາກອນທຸກປະການ. ຄຳທຳນວາຍລ່ວງໜ້າເຖິງພາລະກິດຂອງພຣະອົງ ໄດ້ສຳເລັດລົງໃນທຸກລາຍລະອຽດ. ພຣະອົງໄດ້ປະກາດຂ່າວສານແຫ່ງຄວາມລອດພົ້ນ ແລະ “ພຣະອົງສອນດ້ວຍຣິດອຳນາດ.” (ລູກາ 4:32). ຈິດໃຈຂອງຜູ້ຟັງເປັນພະຍານວ່າ ຄຳສອນຂອງພຣະອົງມາຈາກສະຫວັນ. ພຣະຄຳພີ ແລະ ພຣະວິນຍານຕ່າງຢືນຢັນວ່າ ພຣະເຈົ້າຊົງມອບພາລະກິດໃຫ້ແກ່ພຣະບຸດ. *{GC 346.1}*

ພວກສາວົກຍັງຄົງຜູກພັນກັບພຣະອາຈານຂອງພວກເຂົາດ້ວຍຄວາມຮັກທີ່ບໍ່ສິ້ນສຸດ; ແຕ່ເຖິງຢ່າງໃດກໍຕາມ, ຄວາມສົງໄສກໍເປັນດັ່ງເງົາມືດທີ່ປົກຄຸມຢູ່ເໜືອຈິດໃຈຂອງພວກເຂົາ. ໃນຄວາມເຈັບປວດນັ້ນພວກເຂົາລືມຖ້ອຍຄຳຂອງພຣະອົງທີ່ກ່າວໄວ້ລ່ວງໜ້າເຖິງການທົນທຸກທໍລະມານ ແລະ ການສິ້ນພຣະຊົນຂອງພຣະອົງ. ພວກເຂົາຄິດວ່າ: ຖ້າຫາກວ່າພຣະເຢຊູໄຫນາຊາເຮັດເປັນພຣະເມຊີອາຜູ້ແທ້ຈິງແລ້ວ, ພວກເຂົາຄົງບໍ່ຕ້ອງທົນກັບຄວາມໂສກເສົ້າ ແລະ ຄວາມສິ້ນຫວັງເຊັ່ນນີ້. ຂໍ້ສົງໄສນີ້ໄດ້ເຮັດໃຫ້ຈິດໃຈຂອງພວກສາວົກທຸກທໍລະມານ ໃນວັນສະບາໂຕທີ່ພຣະຜູ້ຊ່ວຍໃຫ້ລອດນອນຢູ່ໃນຫຼຸມຝັງສົບ ກ່ອນທີ່ພຣະອົງຈະຟື້ນຈາກຄວາມຕາຍ. *{GC 346.2}*

ເຖິງແມ່ນວ່າຄວາມໂສກເສົ້າເໝືອນຄວາມມືດມົນ ໄດ້ປົກຄຸມຢູ່ເໜືອພວກສາວົກຂອງພຣະເຢຊູ, ແຕ່ພຣະເຈົ້າບໍ່ໄດ້ປະຖິ້ມພວກເຂົາ. ຜູ້ເຜີຍພຣະທຳໄດ້ກ່າວວ່າ: “ເມື່ອຂ້າພະເຈົ້ານັ່ງຢູ່ໃນຄວາມມືດ, ພຣະເຢໂຮວາຈະຊົງເປັນຄວາມສະຫວ່າງແກ່ຂ້າພະເຈົ້າ, . . . ພຣະອົງຈະຊົງນຳຂ້າພະເຈົ້າໄປຍັງຄວາມສະຫວ່າງ ແລະ ຂ້າພະເຈົ້າຈະເຫັນຄວາມຊອບທຳຂອງພຣະອົງ.” “ສຳລັບພຣະອົງ ແມ່ນຄວາມ

[1] ໝາຍເຖິງການຖືກຂ້າ.

ມືດກໍ່ບໍ່ໄດ້ລີ້ຊ່ອນອັນໃດໄວ້ຈາກພຣະອົງ; ກາງຄືນກໍ່ແຈ້ງຢ່າງກາງເວັນ, ຄວາມມືດເປັນຢ່າງຄວາມ ສະຫວ່າງ." ພຣະເຈົ້າຊົງກ່າວວ່າ: "ແສງສະຫວ່າງສ່ອງແຈ້ງໃນຄວາມມືດສຳລັບຄົນສັດຊື່." "ເຮົາ ຈະຈູງຄົນຕາບອດໄປໃນທາງທີ່ເຂົາບໍ່ຮູ້ຈັກ ເຮົາຈະນຳເຂົາໄປໃນທາງທັງຫຼາຍທີ່ເຂົາບໍ່ຮູ້ຈັກ; ເຮົາໃຫ້ ຄວາມມືດຂ້າງໜ້າເຂົາກັບກາຍເປັນຄວາມສະຫວ່າງ, ສິ່ງທີ່ຄົດງໍໃຫ້ຊື່ກົງ; ສິ່ງເຫຼົ່ານີ້ເປັນສິ່ງທີ່ເຮົາຈະ ກະທຳແກ່ພວກເຂົາ ແລະ ເຮົາຈະບໍ່ປະຖິ້ມພວກເຂົາ." (ມີກາ 7:8, 9 TKJV; ເພງສັນລະເສີນ 139:12 TKJV; 112:4; ເອຊາຢາ 42:16 TKJV). *{GC 346.3}*

ຖ້ອຍຄຳທີ່ພວກສາວົກປະກາດໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ ລ້ວນແຕ່ເປັນຄວາມຈິງທຸກ ປະການ ແລະ ເຫດການທີ່ພວກເຂົາກ່າວເຖິງ ກຳລັງເກີດຂຶ້ນໃນຂະນະທີ່ພວກເຂົາປະກາດວ່າ: "ເວລາ ທີ່ໄດ້ກຳນົດໄວ້ມາເຖິງແລ້ວ ແລະ ຣາຊອານາຈັກຂອງພຣະເຈົ້າກໍມາໃກ້ແລ້ວ." (ມາຣະໂກ 1:15). ເມື່ອ ສິ້ນສຸດເວລາ 69 ອາທິດທີ່ກຳນົດໄວ້ສຳລັບການປາກົດຂອງພຣະເມຊີອາ[2] ຕາມຄຳພະຍາກອນໃນ ພຣະທຳດານີເອນບົດທີ 9 ແລ້ວ, ພຣະຄຣິສໄດ້ຮັບການເຈີມຕັ້ງດ້ວຍພຣະວິນຍານ ຫຼັງຈາກທີ່ໄດ້ຮັບ ບັບຕິສະມາຈາກໂຢຮັນໃນແມ່ນ້ຳຈໍແດນ. ສ່ວນ "ຣາຊອານາຈັກຂອງພຣະເຈົ້າ" ທີ່ພວກເຂົາປະກາດວ່າ ມາໃກ້ແລ້ວນັ້ນ ກໍໄດ້ຮັບການແຕ່ງຕັ້ງດ້ວຍການສິ້ນພຣະຊົນຂອງພຣະຄຣິສ. ອານາຈັກຂອງພຣະຄຣິສ ບໍ່ ໄດ້ເປັນອານາຈັກຝ່າຍໂລກຢ່າງທີ່ພວກເຂົາຖືກສອນມາ ແລະ ບໍ່ໄດ້ເປັນອານາຈັກແຫ່ງຊີວິດນິຣັນ ທີ່ຈະ ໄດ້ຮັບການແຕ່ງຕັ້ງຂຶ້ນເມື່ອ "ອຳນາດ ແລະ ຄວາມຍິ່ງໃຫຍ່ຂອງອານາຈັກທັງໝົດໃນແຜ່ນດິນໂລກ ນັ້ນ ຈະຖືກມອບໃຫ້ແກ່ປະຊາຊົນຂອງພຣະເຈົ້າອົງສູງສຸດ" ຄື ອານາຈັກອັນເປັນນິຣັນດອນທີ່ "ບັນດາຜູ້ ມີອຳນາດປົກຄອງທັງໝົດຈະນະມັດສະການ ແລະ ເຊື່ອຟັງພຣະອົງ." (ດານີເອນ 7:27 LCV). ຕາມ ພຣະຄຳພີນັ້ນ ຄຳວ່າ "ອານາຈັກຂອງພຣະເຈົ້າ" ໝາຍເຖິງທັງອານາຈັກແຫ່ງພຣະຄຸນ ແລະ ອານາຈັກ ແຫ່ງສະຫງ່າຣາສີ. ອາຈານໂປໂລໄດ້ກ່າວເຖິງອານາຈັກແຫ່ງພຣະຄຸນໃນຈົດໝາຍຂອງເພິ່ນທີ່ຂຽນເຖິງ ຊາວເຮັບເຣີ. ຫຼັງຈາກທີ່ກ່າວເຖິງພຣະຄຣິສໃນຖານະຄົນກາງທີ່ຊົງ "ເຫັນໃຈໃນຄວາມອ່ອນແອຂອງ ພວກເຮົາ," ອັກຄະສາວົກໂປໂລໄດ້ກ່າວວ່າ: "ດ້ວຍເຫດນັ້ນ, ຈົ່ງໃຫ້ເຮົາທັງຫຼາຍມີໃຈກ້າ ເຂົ້າໄປ ເຖິງ*ພຣະທີ່ນັ່ງແຫ່ງພຣະຄຸນ* ເພື່ອພວກເຮົາຈະໄດ້ຮັບພຣະເມດຕາ ແລະ ພົບພຣະຄຸນທີ່ຈະຊ່ວຍເຮົາ ໃນເວລາທີ່ຕ້ອງການ." (ເຮັບເຣີ 4:15, 16). ພຣະທີ່ນັ່ງແຫ່ງພຣະຄຸນເປັນສັນຍະລັກຂອງອານາຈັກ ແຫ່ງພຣະຄຸນ ເພາະການມີພຣະທີ່ນັ່ງກໍສະແດງວ່າຕ້ອງມີອານາຈັກ. ໃນຄຳອຸປະມາຫຼາຍເລື່ອງຂອງ ພຣະຄຣິສ ພຣະອົງໃຊ້ຄຳວ່າ: "ແຜ່ນດິນສະຫວັນ" ເພື່ອສະແດງເຖິງພາລະກິດແຫ່ງພຣະຄຸນຕໍ່ຈິດໃຈ ຂອງມະນຸດ. *{GC 346.4}*

ສ່ວນພຣະທີ່ນັ່ງແຫ່ງສະຫງ່າຣາສີນັ້ນ ໝາຍເຖິງອານາຈັກແຫ່ງສະຫງ່າຣາສີ ເຊິ່ງພຣະຜູ້ຊ່ວຍ-ໃຫ້ລອດໄດ້ກ່າວເຖິງດັ່ງນີ້ວ່າ: "ເມື່ອບຸດມະນຸດຈະສະເດັດມາໃນສະຫງ່າຣາສີ ພ້ອມກັບເຫຼົ່າທູດສະຫວັນ ຜູ້ບໍຣິສຸດທັ້ງປວງ, ເມື່ອນັ້ນພຣະອົງຈະປະທັບເທິງພຣະທີ່ນັ່ງອັນຮຸ່ງເຮືອງຂອງພຣະອົງ. ບັນດາປະຊາຊາດ ຕ່າງ ໆ ຈະປະຊຸມພ້ອມກັນຕໍ່ພຣະພັກພຣະອົງ." (ມັດທາຍ 25:31, 32 TKJV). ອານາຈັກດັ່ງກ່າວ ຍັງເປັນເລື່ອງຂອງອະນາຄົດຢູ່ ເຊິ່ງຈະບໍ່ໄດ້ຮັບການແຕ່ງຕັ້ງຂຶ້ນ ຈົນກວ່າພຣະຄຣິສຈະສະເດັດມາຄັ້ງທີ ສອງ. *{GC 347.1}*

ອານາຈັກແຫ່ງພຣະຄຸນໄດ້ຖືກສ້າງຕັ້ງຂຶ້ນທັນທີ ພາຍຫຼັງທີ່ມະນຸດຫຼົງເຮັດບາບ ເມື່ອແຜນການໄຖ່ ມະນຸດໃຫ້ລອດໄດ້ຖືກວາງໄວ້. ໃນເວລານັ້ນ, ອານາຈັກແຫ່ງພຣະຄຸນຍັງບໍ່ໄດ້ເກີດຂຶ້ນເທື່ອ ແຕ່ມີຢູ່ໃນ ພຣະປະສົງ ແລະ ພຣະສັນຍາຂອງພຣະເຈົ້າ; ແລະມະນຸດສາມາດເຂົ້າມາເປັນໄພ່ພົນຂອງອານາຈັກ ນັ້ນໄດ້ໂດຍຄວາມເຊື່ອ. ແຕ່ອານາຈັກແຫ່ງພຣະຄຸນບໍ່ໄດ້ຖືກສ້າງຕັ້ງຂຶ້ນຢ່າງແທ້ຈິງ ຈົນກວ່າພຣະຄຣິສ

[2] "ພຣະເມຊີອາ" ຄື "ຜູ້ຖືກເຈີມ" (ດານີເອນ 9:25 ຕາມພາສາເຮັບເຣີ).

ໄດ້ສິ້ນພຣະຊົນ. ແມ່ນແຕ່ຫຼັງຈາກເລີ່ມພາລະກິດຂອງພຣະອົງໃນໂລກນີ້ແລ້ວ ພຣະຜູ້ຊ່ວຍໃຫ້ລອດ ອາດປ່ຽນພຣະໄທຈາກການສະຫຼະພຣະຊົນເທິງໄມ້ກາງແຂນ ເພາະຄວາມດື້ດ້ານ ແລະ ການບໍ່ຮູ້ບຸນຄຸນຂອງມະນຸດ. ໃນສອນເຄັດເຊມາເນ ຈອກແຫ່ງຄວາມທຸກຂະເວດທະນາ ໄດ້ສັ່ນຄອນຢູ່ໃນພຣະຫັດຂອງພຣະອົງ. ໃນຄາວນັ້ນ, ພຣະອົງສາມາດເຊັດເຫື່ອທີ່ອອກເປັນຢົດເລືອດຈາກໜ້າຜາກຂອງພຣະອົງ ແລ້ວປ່ອຍໃຫ້ມະນຸດສະໂລກພິນາດໃນຄວາມບາບຂອງພວກເຂົາ. ຖ້າພຣະອົງໄດ້ເຮັດເຊັ່ນນັ້ນ ກໍຈະບໍ່ມີການໄຖ່ມະນຸດໃຫ້ພົ້ນຈາກຄວາມຜິດບາບ; ແຕ່ເມື່ອພຣະຜູ້ຊ່ວຍໃຫ້ລອດໄດ້ສະຫຼະພຣະຊົນ ແລະ ເປັ່ງພຣະສຸຣະສຽງເປັນຄັ້ງສຸດທ້າຍວ່າ “ສຳເລັດແລ້ວ,” ແຜນການແຫ່ງການໄຖ່ມະນຸດໃຫ້ພົ້ນຈຶ່ງແນ່ນອນ. ການສິ້ນພຣະຊົນຂອງພຣະຄຣິສ ໄດ້ຢືນຢັນພຣະສັນຍາທີ່ເຄີຍກ່າວໄວ້ແກ່ມະນຸດຄູ່ທຳອິດໃນສວນເອເດນ. ອານາຈັກແຫ່ງພຣະຄຸນທີ່ກ່ອນໜ້ານີ້ມີຢູ່ໂດຍພຣະສັນຍາຂອງພຣະເຈົ້າ ຈຶ່ງໄດ້ຖືກສະຖາປະນາຂຶ້ນ. *{GC 347.2}*

ດັ່ງນັ້ນ, ການສິ້ນພຣະຊົນຂອງພຣະຄຣິສ ອັນເປັນເຫດການທີ່ພວກສາວົກຄິດວ່າ ເປັນການທຳລາຍຄວາມຫວັງສຸດທ້າຍຂອງພວກເຂົາ ຈຶ່ງເປັນສິ່ງທີ່ຮັບປະກັນຄວາມຫວັງໃຫ້ໝັ້ນຄົງຕະຫຼອດໄປ. ເຖິງແມ່ນວ່າເຫດການນັ້ນເຮັດໃຫ້ພວກເຂົາຜິດຫວັງຢ່າງຂົມຂື່ນ, ແຕ່ເປັນຫຼັກຖານຢືນຢັນທີ່ສຳຄັນທີ່ສຸດວ່າ ຄວາມເຊື່ອຂອງພວກເຂົານັ້ນຖືກຕ້ອງ. ການສິ້ນພຣະຊົນຂອງພຣະຄຣິສ ໄດ້ເຮັດໃຫ້ພວກເຂົາເຕັມໄປດ້ວຍຄວາມໂສກເສົ້າ ແລະ ຄວາມສິ້ນຫວັງ ແຕ່ເປັນສິ່ງທີ່ເປີດປະຕູແຫ່ງຄວາມຫວັງໃຫ້ແກ່ມະນຸດສະໂລກ ຄືລູກຫຼານຂອງອາດາມທຸກຄົນ; ແລະເປັນເຫດການທີ່ໃຫ້ຊີວິດນິຣັນ ແລະ ຄວາມສຸກຕະຫຼອດການ ໃຫ້ແກ່ຄົນຂອງພຣະເຈົ້າທຸກຄົນທີ່ສັດຊື່ໃນທຸກຍຸກສະໄໝ. *{GC 348.1}*

ພຣະປະສົງແຫ່ງພຣະເມດຕາ ອັນບໍ່ມີສິ້ນສຸດຂອງພຣະເຈົ້າກຳລັງສຳເລັດ ເຖິງແມ່ນວ່າຕ້ອງຜ່ານຄວາມຜິດຫວັງຂອງພວກສາວົກ. ເຖິງແມ່ນວ່າພຣະຄຸນ ແລະ ການສອນດ້ວຍສິດອຳນາດຂອງພຣະຄຣິສທີ່ບໍ່ເໝືອນຄົນອື່ນ[3] ໄດ້ຊະນະໃຈພວກສາວົກແລ້ວກໍຕາມ, ແຕ່ຄວາມຫຍິ່ງຍະໂສ ແລະ ຄວາມທະເຍີທະຍານຢ່າງເຫັນແກ່ຕົວ ໄດ້ປະສົມປົນເປໄປກັບຄວາມຮັກທີ່ພວກເຂົາມີຕໍ່ພຣະເຢຊູ ເໝືອນດັ່ງຂີ້ແຮ່ປະສົມກັບທອງຄຳບໍຣິສຸດ. ແມ່ນແຕ່ໃນງານລ້ຽງເທດສະການປັດສະຄາ ໃນຊົ່ວໂມງແຫ່ງຄວາມເສົ້າໂສກເມື່ອພຣະຄຣິສກຳລັງຈະສະເດັດໄປສອນເຄັດເຊມາເນ “ກໍມີການໂຕ້ຖຽງກັນເກີດຂຶ້ນໃນທ່າມກາງພວກສາວົກວ່າ ໃນພວກເພິ່ນຜູ້ໃດຈະເປັນໃຫຍ່ກວ່າໝູ່.” (ລູກາ 22:24). ພວກສາວົກກຳລັງໃຝ່ຝັນເຖິງບັນລັງ, ມົງກຸດ ແລະ ສະຫງ່າຣາສີ, ໃນຂະນະທີ່ຄວາມອັບອາຍ ແລະ ຄວາມທຸກທໍລະມານແຫ່ງສອນເຄັດເຊມາເນ, ສານພິພາກສາ ແລະ ໄມ້ກາງແຂນແຫ່ງຄານວາຣີຢູ່ຕໍ່ໜ້າພວກເຂົາ. ສາເຫດທີ່ພວກສາວົກຢຶດເອົາຄຳສອນເທັດ ອັນເປັນທີ່ນິຍົມໃນຍຸກສະໄໝນັ້ນ ກໍຍ້ອນຄວາມທະນົງໃຈ ແລະ ຄວາມຫິວກະຫາຍໃນສັກສີຝ່າຍໂລກ, ພວກເຂົາຈຶ່ງບໍ່ໄດ້ໃສ່ໃຈຕໍ່ຄຳສອນຂອງພຣະຜູ້ຊ່ວຍໃຫ້ລອດ ທີ່ເປີດເຜີຍລັກສະນະອັນແທ້ຈິງແຫ່ງອານາຈັກຂອງພຣະອົງ ແລະ ທີ່ກ່າວເຖິງຄວາມທຸກ ແລະ ການສິ້ນພຣະຊົນຂອງພຣະອົງ. ຄວາມຜິດເຫຼົ່ານີ້ນຳໄປສູ່ການຖືກທົດສອບຢ່າງຮຸນແຮງ ເຊິ່ງພຣະເຈົ້າຊົງອະນຸຍາດໃຫ້ເກີດຂຶ້ນເພາະຈຳເປັນໃນການຕີສອນພວກເຂົາ. ເຖິງແມ່ນວ່າ ພວກສາວົກບໍ່ເຂົ້າໃຈຄວາມໝາຍຂອງຂ່າວສານທີ່ຕົນປະກາດ ແລະ ບໍ່ໄດ້ຮັບຕາມທີ່ຄາດຫວັງໄວ້, ແຕ່ພວກເຂົາໄດ້ປະກາດຄຳເຕືອນທີ່ພຣະເຈົ້າຊົງມອບໝາຍໃຫ້ ແລະ ພຣະອົງຊົງຕອບແທນຄວາມເຊື່ອ ແລະ ການເຊື່ອຟັງຂອງພວກເຂົາ. ພຣະເຈົ້າຊົງມອບໝາຍໃຫ້ພວກເຂົາປະກາດຂ່າວປະເສີດອັນຮຸ່ງເຮືອງເລື່ອງການຟື້ນພຣະຊົນຂອງອົງພຣະຜູ້ເປັນເຈົ້າຂອງພວກເຂົາ ແກ່ທຸກຊົນຊາດ. ເພາະເຫດນີ້, ພຣະອົງຈຶ່ງຍອມໃຫ້ພວກສາວົກຜ່ານປະສົບການອັນຂົມຂື່ນ ເພື່ອກະກຽມພວກເຂົາສຳລັບວຽກງານດັ່ງກ່າວ. *{GC 348.2}*

[3] ໂຢຮັນ 7:46; ມັດທາຍ 7:28–29; ລູກາ 4:32.

ຫຼັງຈາກການຟື້ນພຣະຊົນ ພຣະເຢຊູໄດ້ປາກົດຕົວຕໍ່ພວກສາວົກຂອງພຣະອົງ ເມື່ອເດີນທາງໄປຍັງເມືອງເອມາອູດ; “ແລ້ວພຣະອົງຈຶ່ງຊົງອະທິບາຍພຣະຄຳພີທຸກຕອນ ທີ່ກ່າວເຖິງເລື່ອງພຣະອົງສູ່ພວກເພິ່ນຟັງ ຄືເລີ່ມແຕ່ໂມເຊ ຕະຫຼອດເຖິງພວກຜູ້ທຳນວາຍ.” (ລູກາ 24:27). ສາວົກເຫຼົ່ານັ້ນຟັງດ້ວຍຄວາມຕື່ນເຕັ້ນດີໃຈ, ຄວາມເຊື່ອສັດທາໄດ້ຈູດປະກາຍຂຶ້ນໃນໃຈ, ພວກເຂົາໄດ້ “ບັງເກີດໃໝ່ເຂົ້າສູ່ຄວາມຫວັງໃຈອັນມີຊີວິດຢູ່” (1 ເປໂຕ 1:3) ແມ່ນແຕ່ກ່ອນທີ່ພຣະເຢຊູຈະເປີດເຜີຍພຣະອົງໃຫ້ພວກເຂົາຮູ້. ພຣະອົງມີພຣະປະສົງໃຫ້ພວກເຂົາເຂົ້າໃຈ ແລະ ມີຄວາມເຊື່ອໝັ້ນໃນ “ຄຳພະຍາກອນທີ່ແນ່ນອນ.” (2 ເປໂຕ 1:19 TKJV). ພຣະອົງຊົງປາຖະໜາໃຫ້ຄວາມຈິງຢັ່ງຮາກລົງເລິກໃນຈິດໃຈຂອງພວກເຂົາ, ບໍ່ແມ່ນພຽງແຕ່ເພາະມັນໄດ້ຮັບການສະໜັບສະໜູນຈາກຄຳພະຍານຂອງພຣະອົງເອງ, ແຕ່ເພາະຫຼັກຖານທີ່ແນ່ນອນ ອັນປາກົດໃຫ້ເຫັນໃນຮູບແບບສັນຍະລັກຂອງລະບົບການຖວາຍບູຊາ ແລະ ໃນຄຳພະຍາກອນຂອງພຣະຄຳພີເດີມ. ມັນເປັນສິ່ງຈຳເປັນສຳລັບຜູ້ຕິດຕາມພຣະຄຣິສ ທີ່ຈະເຂົ້າໃຈໃນສິ່ງທີ່ຕົນສັດທາ, ບໍ່ພຽງແຕ່ເພື່ອພວກເຂົາເອງ ແຕ່ເພື່ອພວກເຂົາຈະປະກາດຄວາມຮູ້ເລື່ອງພຣະຄຣິສໃຫ້ຊາວໂລກໄດ້ຮູ້. ໃນຂັ້ນຕອນທຳອິດຂອງການໃຫ້ຄວາມຮູ້ດັ່ງກ່າວ, ພຣະເຢຊູຊົງໃຫ້ສາວົກເຫຼົ່ານັ້ນໃສ່ໃຈກັບຄຳຂຽນຂອງໂມເຊ ແລະ ພວກຜູ້ເຜີຍພຣະທຳ. ຄຳພະຍານນີ້ຂອງພຣະອົງຫຼັງຈາກທີ່ຊົງເປັນຂຶ້ນຈາກຄວາມຕາຍ ສະແດງໃຫ້ເຫັນວ່າພຣະອົງຊົງໃຫ້ຄວາມສຳຄັນ ແລະ ຄຸນຄ່າຕໍ່ພຣະຄຳພີເດີມພຽງໃດ. *{GC 349.1}*

ປະກາຍແຫ່ງຄວາມຫວັງໃໝ່

ຈິດໃຈຂອງພວກສາວົກປ່ຽນແປງຢ່າງໃຫຍ່ຫຼວງ ເມື່ອໄດ້ເຫັນພຣະພັກອັນເຕັມໄປດ້ວຍຄວາມຮັກຂອງພຣະອາຈານອີກຄັ້ງໜຶ່ງ! (ເບິ່ງ ລູກາ 24:32). ພວກເຂົາໄດ້ “ພົບຜູ້ທີ່ໂມເຊໄດ້ກ່າວເຖິງໃນໜັງສືພຣະບັນຍັດ ແລະ ທີ່ພວກຜູ້ປະກາດພຣະທຳໄດ້ກ່າວເຖິງ”[4] ໃນຄວາມໝາຍທີ່ເລິກເຊິ່ງ ແລະ ສົມບູນກວ່າເກົ່າ. ຄວາມບໍ່ແນ່ນອນ, ຄວາມອຸກໃຈ ແລະ ຄວາມສິ້ນຫວັງ ໄດ້ກັບກາຍເປັນຄວາມໝັ້ນໃຈອັນສົມບູນ ແລະ ຄວາມເຊື່ອທີ່ບໍ່ມີຂໍ້ສົງໄສ. ສະນັ້ນ, ຈຶ່ງບໍ່ເປັນທີ່ໜ້າປະຫຼາດໃຈເລີຍ ທີ່ຫຼັງຈາກພຣະອົງສະເດັດຂຶ້ນສະຫວັນໄປແລ້ວ ພວກເຂົາ “ສືບຕໍ່ຢູ່ໃນບໍລິເວນພຣະວິຫານທຸກວັນ ເພື່ອສັນລະເສີນ ແລະ ໂມທະນາຂອບພຣະຄຸນພຣະເຈົ້າ.” (ລູກາ 24:53). ປະຊາຊົນຮູ້ແຕ່ພຽງການສິ້ນພຣະຊົນຢ່າງໜ້າອັບອາຍຂອງພຣະຜູ້ຊ່ວຍໃຫ້ລອດ ຈຶ່ງຄາດວ່າພວກສາວົກຄົງມີໃບໜ້າທີ່ເຕັມໄປດ້ວຍຄວາມໂສກເສົ້າເສຍໃຈ, ຄວາມສັບສົນ ແລະ ຄວາມພ່າຍແພ້; ແຕ່ສິ່ງທີ່ພວກເຂົາເຫັນກັບເປັນຄວາມຊົ່ມຊື່ນຍິນດີ ແລະ ໄຊຊະນະ. ປະສົບການຂອງພວກສາວົກ ໄດ້ຊ່ວຍພວກເຂົາໃຫ້ກຽມພ້ອມສຳລັບວຽກງານທີ່ລໍຖ້າຢູ່ຂ້າງໜ້າຢ່າງແທ້ຈິງ! ພວກເຂົາໄດ້ຜ່ານການທົດລອງອັນໜັກໜ່ວງທີ່ສຸດເທົ່າທີ່ພວກເຂົາຈະປະສົບໄດ້ ແລະ ເມື່ອທຸກຢ່າງເບິ່ງຄືເປັນໄປບໍ່ໄດ້ຕາມສາຍຕາຂອງມະນຸດ, ພຣະຄຳຂອງພຣະເຈົ້າກໍສຳເລັດຢ່າງມີໄຊ. ແຕ່ນັ້ນໄປ, ບໍ່ມີສິ່ງໃດສາມາດດັບຄວາມເຊື່ອຂອງພວກເຂົາ ຫຼື ເຮັດໃຫ້ຄວາມຮັກຂອງພວກເຂົາເຢັນລົງໄດ້. ໃນຄວາມເສົ້າສະຫຼົດໃຈນັ້ນ ພວກເຂົາຍັງ “ຍຶດໝັ້ນຄວາມຫວັງ” ເຊິ່ງເປັນດັ່ງ “ສະໝໍທີ່ແທ້ຈິງອັນໝັ້ນຄົງຂອງຈິດໃຈ.” (ເຮັບເຣີ 6:18, 19). ພວກເຂົາໄດ້ເປັນພະຍານເຖິງສະຕິປັນຍາ ແລະ ຣິດອຳນາດຂອງພຣະເຈົ້າ ຈຶ່ງມີຄວາມເຊື່ອວ່າ “ບໍ່ມີສິ່ງໃດແຍກພວກເຂົາຈາກຄວາມຮັກຂອງພຣະເຈົ້າໄດ້, ຄວາມຕາຍ ຫຼື ຊີວິດກໍດີ, ເທວະດາ ຫຼື ຜູ້ຄອບຄອງກໍດີ, ຫຼືສິ່ງທີ່ມີຢູ່ໃນປັດຈຸບັນ ຫຼືສິ່ງທີ່ຈະມີມາໃນອະນາຄົດກໍດີ ຫຼືຣິດເດດທັງຫຼາຍ, ຄວາມ

[4] ໂຢຮັນ 1:45 LO1972.

ສູງ ຫຼື ຄວາມເລິກກໍດີ ຫຼືສິ່ງອື່ນໃດຊົ່ວສ້າງແລ້ວນັ້ນກໍດີ ຈະບໍ່ສາມາດແຍກພວກເຮົາອອກຈາກ ຄວາມຮັກຂອງພຣະເຈົ້າ ເຊິ່ງມີຢູ່ໃນພຣະເຢຊູຄຣິສເຈົ້າ ອົງພຣະຜູ້ເປັນເຈົ້າຂອງພວກເຮົາ.” ພວກເຂົາ ກ່າວວ່າ: “ໃນເຫດການທັງປວງເຫຼົ່ານີ້ ພວກເຮົາກໍມີໄຊຊະນະຢ່າງເຫຼືອລົ້ນ ໂດຍທາງພຣະອົງຜູ້ຊົງ ຮັກພວກເຮົາທັງຫຼາຍນັ້ນ.” (ໂຣມ 8:38, 39, 37). “ພຣະຄຳຂອງອົງພຣະຜູ້ເປັນເຈົ້າຕັ້ງໝັ້ນຄົງຢູ່ ຕະຫຼອດຊົ່ວນິຣັນດອນ.” (1 ເປໂຕ 1:25). ພວກສາວົກເຊື່ອຕາມຂໍ້ພຣະຄຳພີທີ່ກ່າວວ່າ: “ຜູ້ໃດຈະເປັນ ຜູ້ລົງໂທດພວກເຂົາອີກ? ເພາະພຣະເຢຊູຄຣິສເຈົ້າແມ່ນຜູ້ທີ່ໄດ້ຕາຍ ແລະ ຍິ່ງກວ່ານັ້ນອີກ ພຣະອົງ ໄດ້*ເປັນຄືນມາຈາກຕາຍ*ແລ້ວ ແລະ ນັ່ງຢູ່ກ້ຳຂວາພຣະຫັດຂອງພຣະເຈົ້າ, ພຣະອົງນັ້ນແຫຼະອະທິຖານ ວິງວອນຂໍເພື່ອພວກເຮົາ.” (ໂຣມ 8:34). *{GC 349.2}*

ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: “ປະຊາຊົນຂອງເຮົາ ຈະບໍ່ຖືກດູໝິ່ນອີກຈັກເທື່ອ.” (ໂຢເອນ 2:26). “ນ້ຳຕາອາດໄຫຼຫຼັ່ງໃນເວລາກາງຄືນ ແຕ່ຄວາມຊົມຊື່ນຍິນດີກໍມີມາໃນຕອນເຊົ້າ.” (ເພງສັນລະເສີນ 30:5). ເຖິງແມ່ນວ່າ ຈະຕ້ອງຜ່ານການເສຍສະຫຼະ ແລະ ການຖືກຂ້າຍ້ອນຄວາມເຊື່ອເໝືອນ ພຣະຄຣິສກໍຕາມ, ແຕ່ພວກສາວົກບໍ່ມີທາງເອົາພາລະກິດການປະກາດຂ່າວປະເສີດເລື່ອງພຣະຄຸນຂອງ ພຣະອົງ ພ້ອມດ້ວຍມົງກຸດແຫ່ງຄວາມຊອບທຳທີ່ຈະໄດ້ຮັບເມື່ອພຣະອົງສະເດັດກັບມາ ໄປແລກກັບ ສັກສີແຫ່ງອານາຈັກຝ່າຍໂລກ ເໝືອນທີ່ພວກເຂົາເຄີຍໃຝ່ຝັນຕອນເລີ່ມເປັນສາວົກໃໝ່ໆ. ສາເຫດທີ່ ເປັນເຊັ່ນນີ້ກໍຍ້ອນວ່າ ພວກເຂົາໄດ້ພົບກັບພຣະຜູ້ຊ່ວຍໃຫ້ລອດຫຼັງຈາກທີ່ພຣະອົງຊົງຟື້ນພຣະຊົນ, ໃນ ຄາວນັ້ນຈິດໃຈຂອງພວກເຂົາມີຄວາມຮ້ອນຮົນ ເມື່ອໄດ້ຟັງຖ້ອຍຄຳຂອງພຣະອົງ; ພວກເຂົາໄດ້ເຫັນ ສີສະ, ພຣະຫັດ ແລະ ພຣະບາດຂອງພຣະອົງທີ່ໄດ້ຮັບບາດເຈັບເພື່ອພວກເຂົາ; ໄດ້ໄປກັບພຣະເຢຊູ ເຖິງເມືອງເບັດທານີ ກ່ອນທີ່ພຣະອົງຈະຖືກຮັບໄປສະຫວັນ ແລະ ໄດ້ເຫັນພຣະອົງຍໍພຣະຫັດຂຶ້ນ ຂະນະທີ່ອວຍພອນພວກເຂົາ ແລະ ສັ່ງພວກເຂົາວ່າ: “ເຈົ້າທັງຫຼາຍຈົ່ງອອກໄປທົ່ວໂລກ ປະກາດ ຂ່າວປະເສີດແກ່ມະນຸດທຸກຄົນ,” ໂດຍກ່າວຕື່ມວ່າ, “ເຮົາຈະຢູ່ກັບເຈົ້າທັງຫຼາຍສະເໝີໄປ.” (ມາຣະໂກ 16:15 TH1971; ມັດທາຍ 28:20 TH1971). ນອກຈາກນັ້ນ, ໃນວັນເພັນເຕຄໍສະເຕພວກຜູ້ເຊື່ອ ໄດ້ຮັບພະລັງຣິດເດດ ເມື່ອພຣະວິນຍານສະເດັດມາເໜືອເຂົາທັງຫຼາຍຕາມພຣະສັນຍາ ແລະ ມີຄວາມ ຊົມຊື່ນຍິນດີທີ່ຮູ້ວ່າ ອົງພຣະຜູ້ເປັນເຈົ້າຂອງພວກເຂົາສະຖິດຢູ່ນຳ. ເນື່ອງຈາກສິ່ງທັງໝົດນີ້ ພວກສາວົກ ຈຶ່ງມີຄວາມພ້ອມໃຈທີ່ຈະເສຍສະຫຼະທຸກຢ່າງເພື່ອການປະກາດ. ພຣະເຈົ້າ “ຊົງຣິດ ສາມາດກະທຳການ ນອກເໜືອສາລະພັດທຸກສິ່ງເກີນກວ່າທີ່ພວກເຮົາຈະຂໍ ຫຼື ຄິດໄດ້.” (ເອເຟໂຊ 3:20). ພຣະອົງຊົງໂຜດ ໃຫ້ພວກສາວົກມີສ່ວນຮ່ວມໃນການທົນທຸກ ແລະ ໃນຄວາມຍິນດີຂອງພຣະຄຣິສ ຄືຄວາມຊົມຊື່ນຍິນດີ ຂອງການນຳພາ “ບຸດຫຼວງຫຼາຍໄປສູ່ສະຫວ່າຣາສີ” (ເຮັບເຣີ 2:10), ນັ້ນເປັນຄວາມ “ຍິນດີອັນ ຮຸ່ງເຮືອງ ເຊິ່ງເຫຼືອທີ່ຈະອະທິບາຍໄດ້.” (1 ເປໂຕ 1:8). ອາຈານໂປໂລກ່າວເຖິງສິ່ງເຫຼົ່ານີ້ວ່າ: “ຄວາມ ທຸກລຳບາກອັນເບົາບາງ ແລະ ຊົ່ວຄາວນີ້” “ບໍ່ອາດທຽບໃສ່ກັບສະຫວ່າຣາສີທີ່ຈະຖືກເປີດເຜີຍແກ່ ພວກເຮົາ.” (2 ໂກຣິນໂທ 4:17; ໂຣມ 8:18). *{GC 350.1}*

ປຽບທຽບການປະກາດຂອງກຸ່ມມິນເລີກັບພວກສາວົກ

ຄົນທີ່ປະກາດເລື່ອງການສະເດັດມາຄັ້ງທີສອງຂອງພຣະຄຣິສ ກໍມີປະສົບການຄ້າຍຄືກັບພວກ ສາວົກທີ່ປະກາດ “ຂ່າວປະເສີດເລື່ອງອານາຈັກສະຫວັນ” ເມື່ອພຣະຄຣິສສະເດັດມາຄັ້ງທຳອິດ. ໃນ ຄາວກ່ອນ, ພວກສາວົກອອກໄປປະກາດວ່າ: “ເວລາທີ່ໄດ້ກຳນົດໄວ້ມາເຖິງແລ້ວ ແລະ ຣາຊອານາຈັກ ຂອງພຣະເຈົ້າກໍມາໃກ້ແລ້ວ.” ເຊັ່ນດຽວກັນ, ມິນເລີ ແລະ ເພື່ອນຮ່ວມງານຂອງເພິ່ນໄດ້ປະກາດວ່າ ໄລຍະ ເວລາສຸດທ້າຍອັນເປັນໄລຍະເວລາທີ່ຍາວນານທີ່ສຸດ ທີ່ພຣະຄຳພີພະຍາກອນໄວ້ນັ້ນກຳລັງຈະສິ້ນສຸດ

ລົງ, ການພິພາກສາໃກ້ເຂົ້າມາແລ້ວ ແລະ ອານາຈັກນິຣັນກຳລັງຈະມາເຖິງ. ການປະກາດຂອງພວກສາວົກກ່ຽວກັບການເວລານັ້ນ ແມ່ນອີງໃສ່ 70 ອາທິດຂອງ ດານີເອນບົດທີ 9. ມິນເລີ ແລະ ເພື່ອນຮ່ວມງານຂອງເພິ່ນໄດ້ປະກາດວ່າ ໄລຍະເວລາ 2,300 ວັນ ທີ່ບັນທຶກໄວ້ໃນພຣະທຳດານີເອນ 8:14 ກຳລັງຈະສິ້ນສຸດລົງ ເຊິ່ງຄຳພະຍາກອນເລື່ອງ 70 ອາທິດກໍເປັນສ່ວນໜຶ່ງຂອງ 2,300 ວັນດັ່ງກ່າວ. ການປະກາດຂອງພວກສາວົກໃນສະໄໝພຣະເຢຊູ ແລະ ການປະກາດຂອງ ວິນລຽມ ມິນເລີ ກໍເນັ້ນຄົນລະສ່ວນຂອງໄລຍະເວລາແຫ່ງຄຳພະຍາກອນອັນດຽວກັນ. *{GC 351.1}*

ແຕ່ຄວາມເຂົ້າໃຈຂອງມິນເລີກັບເພື່ອນຮ່ວມງານຂອງເພິ່ນຕໍ່ສິ່ງທີ່ພວກເຂົາປະກາດກໍຍັງບໍ່ສົມບູນເຊັ່ນດຽວກັບພວກສາວົກລຸ້ນທຳອິດ. ຄຳສອນທຽມເທັດທີ່ຝັງເລິກໃນຄຣິສຕະຈັກເປັນເວລາດົນນານເປັນອຸປະສັກຂັດຂວາງພວກເຂົາ ບໍ່ໃຫ້ເຂົ້າໃຈປະເດັນສຳຄັນອັນໜຶ່ງຂອງຄຳພະຍາກອນຢ່າງຖືກຕ້ອງ. ສະນັ້ນ, ເຖິງແມ່ນວ່າພວກເຂົາໄດ້ປະກາດຂ່າວສານທີ່ພຣະເຈົ້າຊົງມອບໝາຍໃຫ້ປະກາດໄປຍັງມະນຸດທຸກຄົນ, ແຕ່ເນື່ອງຈາກຄວາມເຂົ້າໃຈຜິດບາງປະການ ພວກເຂົາຈຶ່ງປະສົບກັບຄວາມຜິດຫວັງ. *{GC 351.2}*

ດານີເອນ 8:14 ຂຽນໄວ້ວ່າ, “ຢູ່ມາ 2,300 ວັນ ແລ້ວສະຖານບໍຣິສຸດນັ້ນຈະໄດ້ຮັບການຊຳລະ.” (ດັດແປງຈາກສະບັບ TKJV). ຢ່າງທີ່ໄດ້ກ່າວມາແລ້ວ, ມິນເລີເຊື່ອເໝືອນຄົນທົ່ວໄປໃນສະໄໝນັ້ນວ່າ ສະຖານບໍຣິສຸດໃນຂໍ້ນີ້ໝາຍເຖິງແຜ່ນດິນໂລກ ແລະ ການຊຳລະນັ້ນ ໝາຍເຖິງການຊຳລະໂລກດ້ວຍໄຟເມື່ອອົງພຣະຜູ້ເປັນເຈົ້າສະເດັດມາ. ດັ່ງນັ້ນ, ເມື່ອພົບວ່າການສິ້ນສຸດຂອງ 2,300 ວັນ ມີການລະບຸໄວ້ຢ່າງແນ່ນອນ ເພິ່ນຈຶ່ງສະຫຼຸບວ່າ ນັ້ນຄືເວລາທີ່ພຣະເຢຊູຄຣິສຈະສະເດັດກັບມາ. ຄວາມຜິດພາດຂອງເພິ່ນ ເປັນຜົນມາຈາກການຮັບເອົາຄວາມເຊື່ອຖືຂອງຄົນທົ່ວໄປໃນສະໄໝນັ້ນ ກ່ຽວກັບຄວາມໝາຍຂອງຄຳວ່າ “ສະຖານບໍຣິສຸດ.” *{GC 352.1}*

ໃນລະບົບການຖວາຍບູຊາຂອງພຣະຄຳພີເດີມ ອັນເປັນເງົາສັນຍະລັກຂອງການສິ້ນພຣະຊົນ ແລະ ການເປັນມະຫາປະໂຣຫິດຂອງພຣະຄຣິສ, ການຊຳລະຫໍເຕັ້ນສັກສິດເປັນພິທີກຳສຸດທ້າຍຂອງມະຫາ-ປະໂຣຫິດໃນແຕ່ລະປີ. ນີ້ແມ່ນວຽກງານສຸດທ້າຍຂອງການໄຖ່ຄົນອິດສະຣາເອນໃຫ້ກັບຄືນດີກັບພຣະເຈົ້າ ຄືການຊຳລະພວກເຂົາຈາກຄວາມຜິດບາບຂອງຕົນ. ວັນລຶບລ້າງມົນທິນບາບໃນພຣະຄຳພີເດີມ ເປັນເງົາສັນຍະລັກຂອງພາລະກິດທີ່ພຣະເຢຊູຄຣິສຊົງປະຕິບັດໃນສະຫວັນ ໃນຖານະມະຫາປະໂຣຫິດຂອງພວກເຮົາ. ພຣະອົງຊົງລຶບລ້າງມົນທິນບາບຂອງໄພ່ພົນຂອງພຣະອົງ ຄືບາບທີ່ບັນທຶກໄວ້ໃນສະຫວັນ. ໃນພາລະກິດດັ່ງກ່າວ, ມີການສຳຫຼວດກວດສອບ ແລະ ການພິພາກສາ; ມັນເປັນວຽກງານສຸດທ້າຍກ່ອນພຣະຄຣິສຈະສະເດັດກັບມາໃນໝູ່ເມກ ພ້ອມດ້ວຍຣິດອຳນາດ ແລະ ຣັດສະໝີພາບແຫ່ງຟ້າສະຫວັນ; ເພາະວ່າ, ຄະດີຂອງມະນຸດທຸກຄົນຈະຜ່ານການພິພາກສາຕັດສິນກ່ອນພຣະອົງຈະສະເດັດມາ. ພຣະເຢຊູຊົງກ່າວວ່າ: “ເຮົາຈະເອົາບຳເໜັດຂອງເຮົາມານຳ ເພື່ອຕອບແທນຕາມການປະຕິບັດຂອງແຕ່ລະຄົນ.” (ພຣະນິມິດ 22:12). ເມື່ອທູດສະຫວັນອົງທີໜຶ່ງກ່າວໃນພຣະນິມິດ 14:7 ວ່າ “ຈົ່ງຢຳເກງພຣະເຈົ້າ ແລະ ຍົກຍ້ອງໃຫ້ກຽດແກ່ພຣະອົງ ເພາະເຖິງເວລາແລ້ວທີ່ພຣະອົງຈະຕັດສິນມະນຸດສະໂລກ,” ນັ້ນໝາຍເຖິງການພິພາກສາທີ່ຈະເກີດຂຶ້ນໃນໄລຍະເວລາສັ້ນ ໆ ກ່ອນພຣະເຢຊູຈະສະເດັດກັບມາ. *{GC 352.2}*

ຜູ້ທີ່ປະກາດຄຳເຕືອນນີ້ ໄດ້ປະກາດຂ່າວສານທີ່ຖືກຕ້ອງໃນເວລາທີ່ເໝາະສົມ, ແຕ່ກໍບໍ່ຕ່າງຫຍັງກັບພວກສາວົກຂອງພຣະເຢຊູ ທີ່ປະກາດໂດຍອີງໃສ່ຄຳພະຍາກອນໃນດານີເອນບົດທີ 9 ວ່າ: “ເວລາທີ່ໄດ້ກຳນົດໄວ້ມາເຖິງແລ້ວ ແລະ ຣາຊອານາຈັກຂອງພຣະເຈົ້າກໍມາໃກ້ແລ້ວ.” ພວກສາວົກບໍ່ໄດ້ສັງເກດວ່າ ຄຳພະຍາກອນດັ່ງກ່າວ ຍັງໄດ້ທຳນວາຍເຖິງການສິ້ນພຣະຊົນຂອງພຣະເມຊີອາດ້ວຍ; ເຊັ່ນດຽວກັນ, ມິນເລີກັບເພື່ອນຮ່ວມງານໄດ້ເທດສະໜາປະກາດ ໂດຍອີງໃສ່ພຣະທຳດານີເອນ 8:14 ແລະ ພຣະນິມິດ

14:7, ແຕ່ບໍ່ໄດ້ສັງເກດວ່າໃນພຣະນິມິດບົດທີ 14 ຍັງມີຂ່າວສານອື່ນ ໆ ທີ່ຈະຕ້ອງປະກາດກ່ອນທີ່ ພຣະຄຣິສຈະສະເດັດກັບມາ. ສະຫຼຸບໄດ້ວ່າ, ພວກສາວົກເຂົ້າໃຈຜິດໃນລັກສະນະຂອງອານາຈັກທີ່ຈະ ຖືກສ້າງຕັ້ງຂຶ້ນເມື່ອຄົບກຳນົດ 70 ອາທິດ; ໃນທຳນອງດຽວກັນ, ຄົນເຫຼົ່ານັ້ນທີ່ລໍຄອຍການສະເດັດ ກັບມາຂອງພຣະເຢຊູ ກໍເຂົ້າໃຈຜິດໃນເລື່ອງເຫດການທີ່ຈະເກີດຂຶ້ນເມື່ອຄົບກຳນົດ 2,300 ວັນແຫ່ງ ຄຳພະຍາກອນ. ໃນທັງສອງກໍລະນີດັ່ງກ່າວກໍມີການຮັບເອົາ ແລະ ຍຶດຖືຄວາມເຊື່ອຜິດ ໆ ຕາມຄວາມ ເຂົ້າໃຈຂອງຄົນທົ່ວໄປໃນສະໄໝຂອງແຕ່ລະກຸ່ມ ຈົນເຮັດໃຫ້ພວກເຂົາຕາບອດບໍ່ເຫັນຄວາມຈິງ. ຢ່າງໃດ ກໍຕາມ, ທັງສອງກຸ່ມນີ້ໄດ້ເຮັດໃຫ້ພຣະປະສົງຂອງພຣະເຈົ້າສຳເລັດໃນການປ່າວປະກາດຂ່າວສານທີ່ ພຣະອົງຊົງປາຖະໜາໃຫ້ປະກາດ ແລະ ທັງ ສອງກຸ່ມຕ້ອງຜິດຫວັງຍ້ອນຄວາມເຂົ້າໃຈຜິດຂອງ ຕົນ. *{GC 352.3}*

ເຖິງຢ່າງໃດກໍຕາມ, ພຣະເຈົ້າຊົງໃຫ້ພຣະປະສົງແຫ່ງພຣະຄຸນສຳເລັດ ໂດຍຊົງຍອມໃຫ້ການປະກາດ ເຕືອນເລື່ອງການພິພາກສາເກີດຂຶ້ນ ຕາມທີ່ປາກົດຢູ່ໃນປະຫວັດສາດ. ໃນຄາວນັ້ນ, ວັນສຳຄັນ ຍິ່ງໃຫຍ່ໃກ້ເຖິງແລ້ວ, ພຣະເຈົ້າຈຶ່ງນຳພາຄົນທັງຫຼາຍໃຫ້ຖືກທົດສອບໃນເລື່ອງເວລາທີ່ກຳນົດໄວ້ຢ່າງ ແນ່ນອນ ເພື່ອພິສູດໃຫ້ທຸກຄົນຮູ້ວ່າມີສິ່ງໃດຢູ່ໃນຈິດໃຈຂອງຕົນ. ພຣະເຈົ້າມີພຣະປະສົງໃຫ້ຂ່າວ ສານດັ່ງກ່າວທົດສອບ ແລະ ຊຳລະຄຣິສຕະຈັກໃຫ້ບໍຣິສຸດ ເພື່ອຈະເຫັນວ່າຄົນໃນຄຣິສຕະຈັກໃສ່ໃຈ ຕາມຄ່ານິຍົມຝ່າຍໂລກ ຫຼືວ່າມີໃຈຈົດຈໍ່ກັບພຣະຄຣິສ ແລະ ສະຫວັນ. ພວກເຂົາອ້າງວ່າຮັກ ພຣະຜູ້ຊ່ວຍໃຫ້ລອດ; ບັດນີ້ມີໂອກາດພິສູດຄວາມຮັກນັ້ນ. ພວກເຂົາພ້ອມແລ້ວຫຼືບໍ່ທີ່ຈະປະຕິເສດຄວາມ ຫວັງ ແລະ ຄວາມທະເຍີທະຍານຝ່າຍໂລກ ແລະ ຕ້ອນຮັບການສະເດັດມາຂອງອົງພຣະຜູ້ເປັນເຈົ້າ ຂອງຕົນດ້ວຍຄວາມຍິນດີ? ພຣະເຈົ້າມີພຣະປະສົງໃຫ້ຂ່າວສານດັ່ງກ່າວ ຊ່ວຍໃຫ້ສະມາຊິກຄຣິສຕະຈັກ ສຳຫຼວດສະພາບແທ້ຂອງຈິດວິນຍານ; ເປັນການປະກາດດ້ວຍພຣະເມດຕາ ເພື່ອກະຕຸ້ນເຂົາທັງຫຼາຍໃຫ້ ສະແຫວງຫາອົງພຣະຜູ້ເປັນເຈົ້າ ດ້ວຍການຖ່ຶມໃຈເກົ່າເອົາໃຈໃໝ່ ຢ່າງນອບນ້ອມຖ່ອມຕົວ. *{GC 353.1}*

ເຖິງແມ່ນວ່າຄວາມຜິດຫວັງທີ່ເກີດຂຶ້ນ ເປັນຜົນຂອງຄວາມເຂົ້າໃຈຜິດຂອງຜູ້ປະກາດ, ແຕ່ພຣະເຈົ້າ ຊົງໃຫ້ຄວາມຜິດຫວັງນັ້ນກາຍເປັນຜົນດີ ເພາະຈະທົດສອບຈິດໃຈຂອງຜູ້ທີ່ອ້າງວ່າຕົນໄດ້ຮັບເອົາ ຄຳຕັກເຕືອນນັ້ນ. ເມື່ອຕ້ອງປະເຊີນໜ້າກັບຄວາມຜິດຫວັງແລ້ວ ພວກເຂົາຈະປະຕິເສດປະສົບການ ຂອງຕົນຢ່າງຮີບດ່ວນ ແລະ ປະຖິ້ມຄວາມໝັ້ນໃຈໃນພຣະຄຳຂອງພຣະເຈົ້າ ຫຼືວ່າ ຈະຖ່ອມໃຈລົງ ອະທິຖານ ເພື່ອສະແຫວງຫາປະເດັນທີ່ເຂົ້າໃຈຜິດໃນຄຳພະຍາກອນ. ມີຈັກຄົນໄດ້ຮັບເອົາຄຳເຕືອນ ເພາະຄວາມຢ້ານກົວ ຫຼື ຍ້ອນອາລົມຕື່ນເຕັ້ນ? ມີຈັກຄົນທີ່ມີສອງຈິດສອງໃຈ ແລະ ບໍ່ເຊື່ອ? ມີຄົນ ຈຳນວນຫຼວງຫຼາຍທີ່ສະແດງຕົນວ່າ ມັກເລື່ອງການສະເດັດກັບມາຂອງພຣະຄຣິສຫຼາຍ ແຕ່ເມື່ອຕ້ອງ ທົນຟັງສຽງເຍາะເຍີ້ຍກັບຄຳດູໝິ່ນຂອງຊາວໂລກ, ເມື່ອຖືກທົດສອບເລື່ອງຄວາມຊັກຊ້າ ແລະ ຄວາມ ຜິດຫວັງ, ຄົນເຫຼົ່ານີ້ຈະປະຖິ້ມຄວາມເຊື່ອບໍ? ເມື່ອບໍ່ສາມາດເຂົ້າໃຈວິທີການຂອງພຣະເຈົ້າທີ່ກ່ຽວຂ້ອງ ກັບຕົນແລ້ວ ພວກເຂົາຈະປະຖິ້ມຄວາມຈິງທີ່ໄດ້ຮັບການສະໜັບສະໜູນຢ່າງແຈ່ມແຈ້ງຈາກພຣະຄຳຂອງ ພຣະອົງຫຼືບໍ່? *{GC 353.2}*

ການທົດສອບດັ່ງກ່າວ ຈະເປີດເຜີຍຄວາມເຂັ້ມແຂງຂອງຜູ້ທີ່ມີຄວາມເຊື່ອແທ້ ແລະ ປະຕິບັດ ຕາມສິ່ງທີ່ເຂົາເຊື່ອວ່າເປັນຄຳສອນຈາກພຣະຄຳ ແລະ ພຣະວິນຍານຂອງພຣະເຈົ້າ. ປະສົບການ ນີ້ຈະສອນບົດຮຽນໄດ້ດີກວ່າວິທີອື່ນວ່າ ການຮັບເອົາທິດສະດີ ແລະ ຄຳອະທິບາຍຂອງມະນຸດ ເປັນສິ່ງທີ່ອັນຕະລາຍ; ແຕ່ຜູ້ເຊື່ອຄວນຄົ້ນຄວ້າພຣະຄຳພີເພື່ອຫາຄຳອະທິບາຍຂອງຂໍ້ພຣະຄຳທີ່ຕົນບໍ່ ເຂົ້າໃຈ. ສຳລັບຜູ້ເຊື່ອແລ້ວ, ຄວາມສັບສົນ ແລະ ຄວາມໂສກເສົ້າທີ່ເກີດຈາກຄວາມເຂົ້າໃຈຜິດ ໄດ້ຊ່ວຍ ນຳພາພວກເຂົາເຖິງຄວາມເຂົ້າໃຈທີ່ຖືກຕ້ອງ ເພາະເປັນເຫດໃຫ້ພວກເຂົາຄົ້ນຄວ້າຄຳພະຍາກອນໃຫ້

ລະອຽດຍິ່ງຂຶ້ນ. ປະສົບການນີ້ ສອນພວກເຂົາໃຫ້ກວດສອບຮາກຖານແຫ່ງຄວາມເຊື່ອຢ່າງລະມັດລະວັງ ຫຼາຍຍິ່ງຂຶ້ນ ແລະ ໃຫ້ປະຕິເສດທຸກສິ່ງທີ່ບໍ່ໄດ້ຖືກສ້າງຂຶ້ນຕາມພຣະຄຳແຫ່ງຄວາມຈິງ ເຖິງແມ່ນວ່າ ຄຣິສຕຽນທົ່ວໂລກຈະຮັບເອົາກໍຕາມ. *{GC 354.1}*

ກຸ່ມຜູ້ເຊື່ອເຫຼົ່ານີ້ເໝືອນກັບພວກສາວົກລຸ້ນທຳອິດ; ສິ່ງທີ່ເຂົ້າໃຈຍາກໃນຍາມທີ່ຖືກທົດສອບຄວາມເຊື່ອ ນັ້ນ ກໍກາຍເປັນສິ່ງທີ່ກະຈ່າງແຈ້ງໃນພາຍຫຼັງ. ເຖິງແມ່ນວ່າພວກເຂົາຕ້ອງຖືກທົດສອບຍ້ອນຄວາມ ເຂົ້າໃຈຜິດຂອງຕົນ ແຕ່ໃນທີ່ສຸດປາຍນັ້ນພວກເຂົາກໍຈະເຫັນວ່າ ພຣະປະສົງແຫ່ງຄວາມຮັກຂອງ ພຣະອົງທີ່ມີຕໍ່ພວກເຂົາ ໄດ້ສຳເລັດຢ່າງຕໍ່ເນື່ອງ. ພວກເຂົາຈະໄດ້ຮຽນຮູ້ຜ່ານປະສົບການອັນປະເສີດ ວ່າ “ອົງພຣະຜູ້ເປັນເຈົ້າກໍຊົງເຕັມໄປດ້ວຍພຣະເມດຕາກະລຸນາ” ແລະ “ທາງຂອງອົງພຣະຜູ້ເປັນເຈົ້າ ນັ້ນແມ່ນຄວາມຮັກ ແລະ ຄວາມສັດຊື່ສຳລັບຜູ້ທີ່ຮັກສາພັນທະສັນຍາ ແລະ ເຊື່ອຟັງຂໍ້ຄຳສັ່ງຂອງ ພຣະອົງ.” (ຢາໂກໂບ 5:11; ເພງສັນລະເສີນ 25:10 LO2012). *{GC 354.2}*

20

ການຟື້ນຟູຄັ້ງຍິ່ງໃຫຍ່

ຂ່າວທູດສະຫວັນອົງທີໜຶ່ງ

ຂ່າວທູດສະຫວັນອົງທີໜຶ່ງໃນພຣະນິມິດບົດທີ 14 ໄດ້ພະຍາກອນໄວ້ລ່ວງໜ້າວ່າ ການປະກາດເລື່ອງ ການສະເດັດກັບມາຂອງພຣະຄຣິສໃນບໍ່ຊ້ານັ້ນ ຈະນຳໄປສູ່ການຕື່ນຕົວທາງສາສະໜາຄັ້ງຍິ່ງໃຫຍ່. ໃນ ພຣະທຳດັ່ງກ່າວມີທູດສະຫວັນອົງໜຶ່ງ “ບິນໄປໃນທ້ອງຟ້າ ມີຂ່າວປະເສີດອັນນິຣັນດອນ ນຳໄປປະກາດ ແກ່ຊາວໂລກທັງປວງ, ແກ່ທຸກປະເທດ, ທຸກຊົນເຜົ່າ, ທຸກພາສາ ແລະ ທຸກຊົນຊາດ.” ທູດສະຫວັນອົງ ນັ້ນ “ເປັ່ງສຽງຮ້ອງວ່າ:” “ຈົ່ງຢຳເກງພຣະເຈົ້າ ແລະ ຍົກຍ້ອງໃຫ້ກຽດແກ່ພຣະອົງ ເພາະເຖິງເວລາແລ້ວ ທີ່ພຣະອົງຈະຕັດສິນມະນຸດສະໂລກ; ຈົ່ງນະມັດສະການພຣະອົງຜູ້ທີ່ໄດ້ສ້າງຟ້າສະຫວັນ, ແຜ່ນດິນໂລກ, ນ້ຳທະເລ ກັບບໍ່ນ້ຳພຸທັງຫຼາຍ.” (ພຣະນິມິດ 14:6, 7). *{GC 355.1}*

ການທີ່ພຣະຄຳພີຂຽນວ່າ ທູດສະຫວັນເປັນຜູ້ປະກາດເຕືອນນັ້ນ ມີຄວາມໝາຍສຳຄັນຫຼາຍ. ດ້ວຍ ລັກສະນະຂອງທູດສະຫວັນທີ່ມີຄວາມບໍຣິສຸດ, ສະຫງ່າຣາສີ ແລະ ຣິດອຳນາດ, ພຣະເຈົ້າຈຶ່ງໃຊ້ ສັນຍະລັກຂອງທູດສະຫວັນ ເພື່ອເນັ້ນເຖິງລັກສະນະອັນສູງສົ່ງຂອງຂ່າວສານດັ່ງກ່າວ ທີ່ຈະປະກາດ ອອກໄປດ້ວຍສະຫງ່າຣາສີ ແລະ ພະລັງຣິດເດດ. ສ່ວນທີ່ຂຽນວ່າທູດສະຫວັນອົງນັ້ນ “ບິນໄປໃນ ທ້ອງຟ້າ” ດ້ວຍການ “ເປັ່ງສຽງຮ້ອງ” ເພື່ອປະກາດເຕືອນ ແລະ ໄດ້ປະກາດແກ່ມະນຸດສະໂລກທຸກ ຄົນນັ້ນ ຄືປະກາດໃຫ້ແກ່ “ທຸກປະເທດ, ທຸກຊົນເຜົ່າ, ທຸກພາສາ ແລະ ທຸກຊົນຊາດ,” ສະແດງໃຫ້ ເຫັນວ່າຂ່າວສານດັ່ງກ່າວຈະຖືກປະກາດໄປທົ່ວໂລກຢ່າງໄວວາ. *{GC 355.2}*

ຂ່າວສານດັ່ງກ່າວໄດ້ໃຫ້ຄວາມກະຈ່າງ ກ່ຽວກັບເວລາທີ່ການເຄື່ອນໄຫວນີ້ຈະເກີດຂຶ້ນ ໂດຍປະກາດ ວ່າມັນເປັນພາກສ່ວນຂອງ “ຂ່າວປະເສີດອັນນິຣັນດອນ” ແລະ ເປັນການປະກາດທີ່ເປີດການພິພາກສາ. ຂ່າວແຫ່ງຄວາມລອດພົ້ນໄດ້ຖືກປະກາດໃນທຸກຍຸກສະໄໝ, ແຕ່ຂ່າວຂອງທູດສະຫວັນອົງທຳອິດນີ້ ເປັນ ສ່ວນຂອງຂ່າວປະເສີດທີ່ສາມາດປະກາດໃນຍຸກສຸດທ້າຍເທົ່ານັ້ນ ເພາະເວລາພິພາກສາເປັນເລື່ອງຂອງ ຍຸກສຸດທ້າຍ. ຄຳພະຍາກອນທັງຫຼາຍໃນພຣະຄຳພີໄດ້ບອກລ່ວງໜ້າ ເຖິງເຫດການຕ່າງໆ ຕາມລຳດັບ ຈົນເຖິງການເປີດການພິພາກສາ ໂດຍສະເພາະແມ່ນຄຳພະຍາກອນໃນພຣະທຳດານີເອນ. ແຕ່ສ່ວນ ຂອງຄຳພະຍາກອນຂອງດານີເອນທີ່ກ່ຽວຂ້ອງກັບຍຸກສຸດທ້າຍ ພຣະອົງຊົງສັ່ງເພີ່ນວ່າ: “ແຕ່ສ່ວນ ເຈົ້າ, ດານີເອນ ຈົ່ງມ້ວນ ແລະ ປະທັບຕາໃສ່ຖ້ອຍຄຳແຫ່ງໜັງສືມ້ວນນີ້ໄວ້ຈົນເຖິງວາລະສຸດທ້າຍ.” (ດານີເອນ 12:4 LCV). ສະນັ້ນ, ຈຶ່ງບໍ່ສາມາດມີການປະກາດເລື່ອງການພິພາກສາ ຈົນກວ່າເວລາທີ່ ຄຳພະຍາກອນກຳນົດໄວ້ນັ້ນໄດ້ມາເຖິງ. ແຕ່ໃນຍຸກສຸດທ້າຍ ຜູ້ເຜີຍພຣະທຳກ່າວວ່າ: “ໃນເວລານັ້ນ ຄົນ ຈຳນວນຫຼວງຫຼາຍຈະແລ່ນໄປແລ່ນມາ ແລະ ຄວາມຮູ້ຈະເພີ່ມທະວີຂຶ້ນ.” (ດານີເອນ 12:4). *{GC 355.3}*

ສ່ວນອັກຄະສາວົກໂປໂລໄດ້ເຕືອນຄຣິສຕະຈັກບໍ່ໃຫ້ຄາດຫວັງວ່າພຣະຄຣິສຈະສະເດັດມາໃນຍຸກ-

ສະໄໝຂອງເພິ່ນ, ໂດຍກ່າວວ່າ: “ວັນນັ້ນຈະບໍ່ມາເຖິງ ຈົນກວ່າການທໍລະຍົດຄັ້ງສຸດທ້າຍຈະເກີດຂຶ້ນກ່ອນ ແລະ ຜູ້ຊົ່ວຮ້າຍຈະປາກົດຕົວຂຶ້ນ.” (2 ເທສະໂລນີກ 2:3). ສະນັ້ນ, ການປະຖິ້ມຄວາມເຊື່ອຄັ້ງໃຫຍ່ ແລະ ການປົກຄອງອັນດົນນານຂອງ “ຜູ້ຊົ່ວຮ້າຍ” ຕ້ອງເກີດຂຶ້ນກ່ອນການສະເດັດກັບມາຂອງອົງພຣະຜູ້ເປັນເຈົ້າຂອງພວກເຮົາ. ຄຳວ່າ “ຜູ້ຊົ່ວຮ້າຍ,” “ອຳນາດອັນເລິກລັບແຫ່ງຄວາມຊົ່ວຮ້າຍ,” ແລະ “ຜູ້ທີ່ຖືກໝາຍໄວ້ສຳລັບນະຮົກ” ໃນພຣະທຳ 2 ເທສະໂລນີກ 2:3–8 ໝາຍເຖິງລະບອບສັນຕະປາປາທີ່ເຮືອງອຳນາດຢູ່ຕະຫຼອດ 1,260 ປີຕາມຄຳພະຍາກອນ. ໄລຍະເວລາດັ່ງກ່າວໄດ້ສິ້ນສຸດລົງໃນປີ 1798. ການສະເດັດມາຂອງພຣະຄຣິສບໍ່ສາມາດເກີດຂຶ້ນກ່ອນເວລານັ້ນ. ຄຳເຕືອນຂອງອາຈານໂປໂລກວມເອົາໄລຍະເວລາທັງໝົດ ຕັ້ງແຕ່ພຣະເຢຊູສະເດັດຂຶ້ນສະຫວັນຈົນເຖິງປີ 1798. ດັ່ງນັ້ນ, ການປະກາດເລື່ອງການສະເດັດກັບມາຂອງພຣະຄຣິສຕ້ອງເກີດຂຶ້ນຫຼັງຈາກປີນັ້ນ. *{GC 356.1}*

ບໍ່ເຄີຍມີການປະກາດຂ່າວສານດັ່ງກ່າວໃນຍຸກສະໄໝຕ່າງ ໆ ກ່ອນໜ້ານັ້ນ. ດັ່ງທີ່ເຮົາໄດ້ເຫັນມາແລ້ວ, ອາຈານໂປໂລກໍບໍ່ໄດ້ປະກາດເລື່ອງນີ້, ເພິ່ນພຽງແຕ່ຊີ້ແນະພີ່ນ້ອງວ່າ ເລື່ອງການສະເດັດກັບມายังเป็นเลื่องของอนาคตอันยาวไกล. พวกนักปะຕິຮູບກໍບໍ່ໄດ້ປະກາດເຊັ່ນກັນ. ມาຕິນ ລູເທີ ກ່າວວ່າ ການພິພາກສາຄົງຈະເກີດຂຶ້ນຫຼັງจากสะไหมของเพิ่นประมาน 300 ปี. ย่างใดกำตาม, นับแต่ปี 1798 เป็นต้นมา พระทำดานิเอนได้เปิดผะหึกไว้ และ ความรู้ในคำพะยากอนได้เพิ่มทะวีขึ้น, มีคนจำนวนหลวงหลายประกาดเตือนว่า การพิพากสานั้นใกล้เข้ามาแล้ว. *{GC 356.2}*

ປะกาดในหลายปะเทดพ้อมกัน

ເຊັ່ນດຽວກັນกับการปะติรูบครั้งใหญ่ในสะตะวัดที 16, ในเวลาดຽวกันมีการเคื่อนไหวปะกาดเลื่องการสะเด็ดกับมาของพระคริสในปะเทดต่าง ๆ ที่มีพื้นถานคริสตยัน. ພຣะເຈົ້າຊົງນຳຊາຍຜູ້ເຊື່ອທີ່ເປັນນັກອະທິຖານบางคน ทั้งในทะวีบเอิธ์บ และ อาเมริกาใต้ค้นคว้าคำพะยากอน; และเมื่อพวกเขาสะก็ดรอยตามคำทำนายในพระคำพี ก็พบหลักถานอันหนักแน่นว่า การสิ้นสุดลงของบันดาทุกสิ่งใกล้จะเถิงแล้ว. ในดินแดนต่าง ๆ มีกลุ่มคริสตยันที่ค้นพบในพระคำพีว่า การสะเด็ดกับมาของพระคริสใกล้เข้ามาแล้ว, โดยกลุ่มเหล่านี้บ่ได้มีการสื่สานพ้อพันกันมาก่อน. *{GC 357.1}*

ในปี 1821, ถือสามปีหลังจากที่ มิลเลิ สะหรุบการค้นคว้าคำพะยากอนที่กล่าวเถิงเวลาของการพิพากสา, ดร. โจเซ็บ วอฟ์ (Dr. Joseph Wolff) ผู้ที่ได้รับการขะหนานนามว่า “ผู้ประกาดแก่ชาวโลกทั้งปวง,” เริ่มประกาดว่าการสะเด็ดมาของพระคริสใกล้แล้ว. อาจานวอฟ์ถือกำเนิดในปะเทดเยยละมัน; พ่อของเพิ่นเป็นรับบีของสาสะหนายิว. ขะนะที่อาจานวอฟ์ยังเยาไอ เพิ่นเชื่อว่าสาสะหนาคริสเป็นความจิง, เพิ่นมีความกะตือลือล้น และ มีจิดใจฝักใฝ่ความรู้, มักฟังบ็ดสนทะนาที่เรือนของพ่อในขะนะที่ชาวเรับเริเต้าโรมกันเป็นปะจำทุกวัน เพื่อหับหวนความคาดหวังของชนชาดยิวเลื่องสะหง่าราสีของพระเมสิอาที่จะสะเด็ดมา และ การฟื้นฟูชนชาดอิดสะราเอน. มื้หนึ่งหนุ่มน้อยวอฟ์ได้ยินคนกล่าวเถิงเยซูไหบาชาเรัด จึ่งถามว่าผู้นั้นแม่นใผ. มีคนตอบว่า: “เยซูเป็นคนยิวที่มีความสามาดหลายที่สุด แต่เพิ่นแอบอ้างว่าเป็นพระเมสิอา; สะพาชาวยิวจึ่งตัดสินปะหานชีวิดเพิ่น.” หนุ่มน้อยถามถืนว่า: “เพาะเหดใดนะคอนเยรูซาเล็มจึ่งต้องถูกทำลาย? เป็นหยังพวกเราต้องอยู่แบบบ่มีบ้านเมืองของตินเอง?” พ่อของเพิ่นตอบว่า: “เป็นตาหนักเสี้าแท้! ย้อนว่าคนยิวได้ข้าบันดาผู้เผียพระทำ.” หนุ่มน้อยคิดได้ทันทีว่า: “หรือว่าพระเยซูเป็นหนึ่งในพวกผู้เผียพระทำเช่นกัน? บางเทื่อพระองค์บ่ได้

ມີຄວາມຜິດເມື່ອພຣະອົງຖືກຊາວຢິວຂ້າ."[1] ວໍຟ໌ຮູ້ສຶກຢ່າງແຮງກ້າວ່າຄວາມຄິດດັ່ງກ່າວຄົງເປັນຄວາມຈິງ, ເພິ່ນຈຶ່ງໄປຢືນໃກ້ໂບດຂອງຄຣິສຕຽນຢູ່ເລື້ອຍ ໆ ເພື່ອຟັງຄຳເທດສະໜາ ເຖິງແມ່ນວ່າໄດ້ຖືກຜູ້ໃຫຍ່ຫ້າມບໍ່ໃຫ້ເຂົ້າໂບດກໍຕາມ. *{GC 357.2}*

ຄັ້ງໜຶ່ງເມື່ອອາຍຸພຽງ 7 ປີ, ເພິ່ນໂອ້ອວດໃຫ້ເພື່ອນບ້ານຄຣິສຕຽນຜູ້ແກ່ຊະລາຄົນໜຶ່ງຟັງວ່າ, ໃນອະນາຄົດ ພຣະເມຊີອາຈະສະເດັດມາໂຜດຊົນຊາດອິດສະຣາເອນໃຫ້ຊະນະສັດຕູທັງປວງ. ແລ້ວຜູ້ເຖົ້ານັ້ນຈຶ່ງຕອບຢ່າງເອັນດູວ່າ: "ທ້າວນ້ອຍເອີຍ, ຂ້ອຍຈະບອກເຈົ້າວ່າພຣະເມຊີອາຜູ້ແທ້ຈິງແມ່ນໃຜ: ແມ່ນພຣະ-ເຢຊູໄທນາຊາເຣັດ . . . ຜູ້ທີ່ບັນພະບຸລຸດຂອງເຈົ້າໄດ້ຄຶງໄວ້ເທິງໄມ້ກາງແຂນ, ບໍ່ຕ່າງຫຍັງກັບທີ່ພວກເຂົາໄດ້ກະທຳຕໍ່ບັນດາຜູ້ເຜີຍພຣະທຳໃນສະໄໝກ່ອນ. ເຈົ້າຈົ່ງເມືອເຮືອນໄປອ່ານພຣະທຳເອຊາຢາບົດທີ 53 ແລ້ວຈະເຫັນວ່າພຣະເຢຊູຄຣິສເປັນພຣະບຸດຂອງພຣະເຈົ້າ."[2] ໃນທັນໃດນັ້ນ, ເພິ່ນກໍຮູ້ສຶກຢ່າງຈັບໃຈວ່າຄຳຂອງຜູ້ເຖົ້ານັ້ນຕ້ອງເປັນຄວາມຈິງ. ເພິ່ນຈຶ່ງກັບບ້ານໄປອ່ານພຣະຄຳພີ; ເມື່ອອ່ານແລ້ວ ກໍປະຫຼາດໃຈທີ່ຊີວິດຂອງພຣະເຢຊູໄທນາຊາເຣັດ ສອດຄ່ອງກັບຄຳພະຍາກອນທຸກປະການ. ເປັນໄປໄດ້ບໍວ່າ ຖ້ອຍຄຳຂອງຜູ້ເຖົ້າຄຣິສຕຽນເປັນຄວາມຈິງ? ຊາຍໜຸ່ມນ້ອຍນັ້ນຈຶ່ງໄປຂໍໃຫ້ພໍ່ຊ່ວຍອະທິບາຍຄຳພະຍາກອນດັ່ງກ່າວ, ແຕ່ພໍ່ບໍ່ປາກບໍ່ເວົ້າຫຍັງ ມີແຕ່ເບິ່ງລູກດ້ວຍສາຍຕາຂວາງ; ວໍຟ໌ຈຶ່ງບໍ່ກ້າເວົ້າເຖິງເລື່ອງນັ້ນອີກ. ເຖິງຢ່າງໃດກໍຕາມ, ສິ່ງນີ້ມີແຕ່ເພີ່ມຄວາມປາຖະໜາທີ່ຈະຮູ້ຈັກສາສະໜາຄຣິສຫຼາຍຂຶ້ນ. *{GC 357.3}*

ພໍ່ແມ່ປິດກັ້ນບໍ່ໃຫ້ວໍຟ໌ຮັບຮູ້ໃນສິ່ງທີ່ເພິ່ນສະແຫວງຫາ ຈົນເມື່ອເພິ່ນອາຍຸໄດ້ 11 ປີ ເພິ່ນກໍອອກຈາກເຮືອນ ເພື່ອສຶກສາຮ່ຳຮຽນ ແລະ ເພື່ອເລືອກເອົາສາສະໜາພ້ອມດ້ວຍວິຊາຊີບຂອງຕົນ. ໃນເບື້ອງຕົ້ນ, ເພິ່ນພັກຢູ່ກັບຍາດຕິພີ່ນ້ອງ ແຕ່ບໍ່ດົນກໍຖືກຂັບໄລ່ໄປໃນຖານະຜູ້ທີ່ປະຖິ້ມສາສະໜາດັ້ງເດີມ. ໜຸ່ມນ້ອຍວໍຟ໌ລຳພັງພຽງຄົນດຽວໄຮ້ຍາດຂາດມິດ ຕ້ອງອອກໄປສູ້ຊີວິດຫາທາງໃຫ້ຕົນເອງທ່າມກາງຄົນແປກໜ້າໂດຍບໍ່ມີເງິນ. ເພິ່ນຈຶ່ງພະເນຈອນໄປຕາມບ່ອນຕ່າງ ໆ ແລະ ສຶກສາຮຽນຮູ້ຢ່າງຂະຫຍັນໝັ່ນພຽນ ແລ້ວຫາເງິນປະທັງຊີວິດໂດຍການສອນພາສາເຮັບເຣີ. ເພິ່ນກໍຮັບເຊື່ອເປັນກາໂຕລິກ ເພາະມີອາຈານສອນທີ່ເປັນກາໂຕລິກ; ແລະມີຄວາມຕັ້ງໃຈວ່າ ຈະອຸທິດຊີວິດເພື່ອປະກາດຂ່າວປະເສີດໃຫ້ກັບຊົນຊາດຂອງຕົນເອງ. ຕໍ່ມາບໍ່ເທົ່າໃດປີ, ເພິ່ນຈຶ່ງໄປນະຄອນໂຣມ ເພື່ອສຶກສາຕາມຈຸດປະສົງດັ່ງກ່າວຢູ່ໃນວິທະຍາໄລສອນນັກປະກາດຂອງກາໂຕລິກ. ແຕ່ນິໄສການເປັນຕົວຂອງຕົວເອງ ແລະ ການເວົ້າກົ້ງໄປກົ້ງມາ ເປັນເຫດໃຫ້ວໍຟ໌ຖືກກ່າວຫາວ່າເປັນຄົນນອກຮີດ. ເພິ່ນໂຈມຕີການປະຕິບັດຢ່າງຜິດພ້ຽນຂອງຄຣິສຕະຈັກໂຣມຢ່າງເປີດເຜີຍ ແລະ ຊຸກຍູ້ໃຫ້ເກີດການປະຕິຮູບ. ເຖິງແມ່ນວ່າໃນຕອນທຳອິດ ເພິ່ນໄດ້ຮັບຄວາມໂປດປານເປັນພິເສດຈາກພວກຜູ້ນຳຊັ້ນສູງໃນລະບອບສັນຕະປາປາ, ແຕ່ຕໍ່ມາກໍຖືກສັ່ງໃຫ້ຍ້າຍອອກຈາກນະຄອນໂຣມ. ເພິ່ນໄປຕາມບ່ອນຕ່າງ ໆ ໂດຍມີເຈົ້າໜ້າທີ່ຄຣິສຕະຈັກຈັບຕາເບິ່ງເພິ່ນຢູ່, ຈົນໃນທີ່ສຸດເຈົ້າໜ້າທີ່ເຫຼົ່ານັ້ນເຫັນຢ່າງແຈ່ມແຈ້ງວ່າ ບໍ່ມີທາງທີ່ຈະໃຫ້ວໍຟ໌ມາຍອມຢູ່ໃຕ້ການບັງຄັບບັນຊາຂອງຄຣິສຕະຈັກໂຣມໄດ້. ພວກເຂົາກ່າວວ່າ ວໍຟ໌ເປັນຄົນໃຈແຂງ ດັດແປງບໍ່ໄດ້ ຈຶ່ງປ່ອຍເພິ່ນໃຫ້ໄປຕາມອິດສະຫຼະ. ເພິ່ນຈຶ່ງເດີນທາງໄປຍັງປະເທດອັງກິດ ແລະ ຮັບເຊື່ອຕາມຫຼັກຄຳສອນໂປຣແຕັສຕັງ ຈຶ່ງເຂົ້າເປັນສະມາຊິກຄຣິສຕະຈັກແຫ່ງອັງກິດ. ຫຼັງຈາກສຶກສາຮ່ຳຮຽນສອງປີ ເພິ່ນກໍອອກໄປປະກາດໃນປີ 1821. *{GC 358.1}*

ອາຈານວໍຟ໌ເຊື່ອຄວາມຈິງອັນຍິ່ງໃຫຍ່ ກ່ຽວກັບການສະເດັດມາຄັ້ງທຳອິດຂອງພຣະຄຣິສໃນຖານະຜູ້ທີ່ "ທົນທຸກນາ ໆ ແລະ ທົນຕໍ່ຄວາມເຈັບປວດ" (ເອຊາຢາ 53:3); ແຕ່ໃນຂະນະດຽວກັນ, ເພິ່ນ

[1] *ການເດີນທາງ ແລະ ການຜະຈົນໄພຂອງ ອາຈານ ໂຈເຊັບ ວໍຟ໌*, ເຫຼັ້ມ 1, ໜ້າ 6.
[2] *ອ້າງອີງຈາກທີ່ດຽວກັນ*, ເຫຼັ້ມ 1, ໜ້າ 7.

ເຫັນວ່າ ຄຳພະຍາກອນໃນພຣະຄຳພີສອນຢ່າງແຈ່ມແຈ້ງເໝືອນກັນວ່າ ພຣະອົງຈະສະເດັດກັບມາຄັ້ງທີສອງ ດ້ວຍຣິດທານຸພາບ ແລະ ສະຫງ່າຣາສີ. ເພິ່ນພະຍາຍາມນຳພາຄົນຮ່ວມຊາດ ໃຫ້ຮູ້ຈັກພຣະເຢຊູໄທນາຊາເຣັດໃນຖານະພຣະເມຊີອາທີ່ຊົງສັນຍາໄວ້ນັ້ນ ຜູ້ຊົງຖ່ອມພຣະອົງລົງໃນການສະເດັດມາຄັ້ງທຳອິດ ເພື່ອເປັນເຄື່ອງໄຖ່ບາບໃຫ້ແກ່ມວນມະນຸດ. ໃນຂະນະດຽວກັນ, ເພິ່ນຍັງສອນພວກເຂົາເຖິງການສະເດັດມາຄັ້ງທີສອງຂອງພຣະອົງວ່າ ພຣະອົງຈະສະເດັດມາໃນຖານະກະສັດ ແລະ ຜູ້ປົດປ່ອຍ. *{GC 358.2}*

"ກຳລັງຂອງຂ້າພະເຈົ້າມາຈາກພຣະຄຳພີ"

ອາຈານວໍຟ໌ກ່າວວ່າ: "ພຣະເຢຊູໄທນາຊາເຣັດເປັນພຣະເມຊີອາທີ່ແທ້ຈິງ. ພຣະຫັດ ແລະ ພຣະບາດຂອງພຣະອົງຖືກແທງ ໃນຂະນະທີ່ພຣະອົງຖືກນຳໄປປະຫານດັ່ງລູກແກະທີ່ຖືກນຳໄປຂ້າ; ພຣະອົງລົ້ງເຄີຍກັບຄວາມທຸກຍາກ ແລະ ຄວາມໂສກເສົ້າ; ພຣະອົງສະເດັດມາຄັ້ງທຳອິດຫຼັງຈາກໄມ້ຄ້ອນເທົ້າຂອງຢູດາຖືກຍາດໄປຕາມຄຳທຳນວາຍຂອງຢາໂຄບ;[3] ພຣະອົງຈະສະເດັດມາຄັ້ງທີສອງ ພ້ອມດ້ວຍໝູ່ເມກແຫ່ງຟ້າສະຫວັນ ແລະ ສຽງເປົ່າແກຂອງອັກຄະເທວະດາ."[4] "ພຣະເຢຊູຈະຢືນເທິງພູເຂົາໝາກກອກເທດ; ສິດທິອຳນາດໃນການປົກຄອງຢູ່ເໜືອທຳມະຊາດທັງປວງ ເຊິ່ງອາດາມເຄີຍໄດ້ຮັບ ແລະ ສູນເສຍໄປນັ້ນ[5] ກໍຈະຖືກມອບໃຫ້ແກ່ພຣະອົງ. ເມື່ອນັ້ນ, ພຣະອົງຈະເປັນກະສັດປົກຄອງຢູ່ເໜືອສາກົນລະໂລກ; ການຄ່ຳຄວນຂອງທຳມະຊາດຈະຢຸດລົງ ເຫຼືອແຕ່ສຽງເພງໂມທະນາສັນລະເສີນ. . . . ເມື່ອພຣະເຢຊູສະເດັດມາດ້ວຍສະຫງ່າຣາສີຂອງພຣະບິດາ ພ້ອມກັບໝູ່ທູດສະຫວັນບໍຣິສຸດ . . . ຜູ້ເຊື່ອທີ່ຕາຍແລ້ວກໍຈະເປັນຂຶ້ນມາກ່ອນ.[6] ນີ້ແມ່ນສິ່ງທີ່ຄຣິສຕຽນເຮົາເອີ້ນວ່າ ການຟື້ນຈາກຄວາມຕາຍຄັ້ງທຳອິດ. ເມື່ອນັ້ນທຳມະຊາດຂອງບັນດາສັດທັງຫຼາຍຈະໄດ້ຮັບການປ່ຽນແປງ[7] ແລະ ຈະສະຫງົບຢູ່ຕໍ່ອົງພຣະເຢຊູ;[8] ຈະມີສັນຕິສຸກສັນຕິພາບທົ່ວສາກົນລະໂລກ;"[9] "ໃນເວລານັ້ນ ອົງພຣະຜູ້ເປັນເຈົ້າຈະຫຼຽວເບິ່ງໂລກອີກ ແລະ ຈະຊົງກ່າວອີກຄັ້ງໜຶ່ງວ່າ, 'ເບິ່ງແມ! ທຸກສິ່ງລ້ວນແຕ່ດີແທ້.'"[10] *{GC 359.1}*

ອາຈານວໍຟ໌ເຊື່ອວ່າ ການສະເດັດກັບມາຂອງພຣະອົງໃກ້ເຂົ້າມາແລ້ວ ແລະ ຈາກການສຶກສາໄລຍະເວລາແຫ່ງຄຳພະຍາກອນ ກໍມາເຖິງຂໍ້ສະຫຼຸບເລື່ອງວັນສິ້ນໂລກທີ່ຫ່າງຈາກມິນເລີບໍ່ເທົ່າໃດປີ. ມີຫຼາຍຄົນອ້າງຂໍ້ພຣະຄຳພີວ່າ, "ບໍ່ມີຜູ້ໃດຮູ້ວ່າວັນ ຫຼື ໂມງນັ້ນຈະມາເຖິງເມື່ອໃດ," ຄືມະນຸດຈະບໍ່ຮູ້ວ່າເມື່ອໃດການສະເດັດມານັ້ນໃກ້ເຂົ້າມາ. ແຕ່ອາຈານວໍຟ໌ຕອບຄົນເຫຼົ່ານີ້ວ່າ: "ແມ່ນຊັ້ນບໍ? ອົງພຣະຜູ້ເປັນເຈົ້າຂອງເຮົາຊົງກ່າວວ່າຈະບໍ່ມີໃຜຮູ້ວັນ ແລະ ໂມງນັ້ນ*ຈັກເທື່ອ*ບໍ? ອົງພຣະຜູ້ເປັນເຈົ້າຂອງເຮົາຊົງກ່າວວ່າຈະບໍ່ມີໃຜຮູ້ວັນ ແລະ ໂມງນັ້ນ*ຈັກເທື່ອ*ບໍ? ອົງພຣະຜູ້ເປັນເຈົ້າຂອງເຮົາຊົງປະທານໝາຍສຳຄັນເພື່ອໃຫ້ພວກເຮົາຮູ້ການເວລາ ເພື່ອວ່າຢ່າງໜ້ອຍເຮົາຈະໄດ້ຮູ້ວ່າ ເມື່ອໃດທີ່ການສະເດັດມາຂອງພຣະອົງ*ເຂົ້າມາໃກ້* ເໝືອນຄົນສາມາດຮູ້ວ່າໃກ້ຈະເຖິງລະດູຮ້ອນ ເມື່ອເຫັນໃບໄມ້ອ່ອນທີ່ຕົ້ນໝາກເດື່ອ. (ເບິ່ງ ມັດທາຍ 24:32). ເປັນໄປໄດ້ຢ່າງໃດວ່າເຮົາຈະບໍ່ມີວັນຮູ້ຈັກເວລາດັ່ງກ່າວ ໃນ

[3] ເບິ່ງ ປະຖົມມະການ 49:10.

[4] *ການຄົ້ນຄວ້າ ແລະ ວຽກງານການປະກາດຂອງ ໂຈເຊັບ ວໍຟ໌*, ໜ້າ 62.

[5] ເບິ່ງ ປະຖົມມະການ 1:26; 3:17.

[6] ເບິ່ງ 1 ເທສະໂລນິກ 4:16; 1 ໂກຣິນໂທ 15:23.

[7] ເບິ່ງ ເອຊາຢາ 11:6–9.

[8] ເບິ່ງ ເພງສັນລະເສີນບົດທີ 8.

[9] *ບັນທຶກຂອງ ອາຈານ ໂຈເຊັບ ວໍຟ໌* (Journal of the Rev. Joseph Wolff), ໜ້າ 378, 379.

[10] *ອ້າງອີງຈາກທີ່ດຽວກັນ*, ໜ້າ 294.

ເມື່ອພຣະອົງເອງຊົງສັ່ງໄວ້ ໃຫ້ເຮົາບໍ່ພຽງແຕ່ອ່ານໜັງສືຂອງຜູ້ເຜີຍພຣະທຳດານີເອນ ແຕ່ຍັງຊົງຂໍໃຫ້ເຂົ້າໃຈອີກດ້ວຍ? ຂໍ້ຄວາມໃນພຣະທຳດານີເອນທີ່ກ່າວເຖິງການປິດຜະໜຶກຄຳພະຍາກອນ (ເຊິ່ງໃນສະໄໝຂອງດານີເອນກໍຖືກປິດໄວ້ຈິງ) ກໍຍັງທຳນວາຍໄວ້ວ່າໃນຍຸກສຸດທ້າຍຈະຖືກເປີດອອກ "ໃນເວລານັ້ນ ຄົນຈຳນວນຫຼວງຫຼາຍຈະແລ່ນໄປແລ່ນມາ ແລະ *ຄວາມຮູ້*ຈະເພີ່ມທະວີຂຶ້ນ." (ດານີເອນ 12:4). ຄວາມໝາຍຂອງຂໍ້ນີ້ຄື: ຈະມີຫຼາຍຄົນຄິດຄົ້ນພິຈາລະນາເລື່ອງເວລານັ້ນ ຈົນເປັນເຫດໃຫ້*ຄວາມ*ຮູ້ໃນເລື່ອງເວລາດັ່ງກ່າວເພີ່ມທະວີຂຶ້ນ. ຖ້ອຍຄຳຂອງອົງພຣະຜູ້ເປັນເຈົ້າຂອງເຮົາບໍ່ໄດ້ໝາຍເຖິງວ່າ ຈະບໍ່ມີໃຜຮູ້ຈັກເມື່ອເວລານັ້ນ*ໃກ້ເຂົ້າມາແລ້ວ*, ແຕ່ໝາຍເຖິງວ່າບໍ່ມີໃຜຮູ້*ແບບເຈາະຈົງເຖິງ ວັນ ແລະ ຊົ່ວໂມງ*ນັ້ນ. ພຣະອົງຊົງກ່າວໄວ້ຢ່າງພຽງພໍ ໃຫ້ເຮົາສັງເກດເຫັນໝາຍສຳຄັນຕ່າງ ໆ ແຫ່ງຍຸກສະໄໝ ເພື່ອຈະເປັນແຮງບັນດານໃຈໃຫ້ເຮົາກຽມພ້ອມ ເໝືອນໂນອາກຽມພ້ອມທີ່ຈະເຂົ້າໄປໃນເຮືອ."[11] *{GC 359.2}*

ອາຈານວໍຟ໌ຂຽນເຖິງວິທີຕີຄວາມໝາຍພຣະຄຳພີ ທີ່ຄົນສ່ວນຫຼາຍໃຊ້ໃນສະໄໝນັ້ນ ຈົນມາເຖິງຂໍ້ສະຫຼຸບທີ່ຜິດ ໆ ນັ້ນວ່າ: "ຄົນທີ່ນັບຖືສາສະໜາຄຣິສສ່ວນໃຫຍ່ ໄດ້ຫັນເຫໄປຈາກຄວາມໝາຍອັນກົງໄປກົງມາຂອງພຣະຄຳພີ ແລະ ຫັນໄປຕີຄວາມແບບຊາວພຸດທີ່ເຫັນທຸກຢ່າງເປັນເລື່ອງສົມມຸດ ແລະ ເຊື່ອວ່າຄວາມສຸກໃນໂລກໜ້າຄືການລອຍໄປລອຍມາໃນຟ້າອາກາດ. ຄົນເຫຼົ່ານີ້ຄິດໄປເອງວ່າ ເມື່ອພຣະຄຳພີຂຽນເຖິງ*ຊາວຢິວ* ກໍໝາຍເຖິງ*ຄົນຕ່າງຊາດ* ແລະ ເມື່ອອ່ານເຖິງ*ນະຄອນເຢຣູຊາເລັມ* ກໍໝາຍເຖິງ*ຄຣິສຕະຈັກ*; ເມື່ອອ່ານຄຳວ່າ*ແຜ່ນດິນໂລກ* ກໍໝາຍເຖິງ*ທ້ອງຟ້າ* ແລະ ການສະເດັດກັບມາຂອງ*ພຣະອົງ* ກໍໝາຍເຖິງການເຄື່ອນໄຫວຂອງ*ອົງກອນປະກາດຂ່າວປະເສີດ*. ຄົນເຫຼົ່ານີ້ຍັງເຊື່ອວ່າ ການຂຶ້ນໄປຍັງພູເຂົາອັນເປັນບ່ອນຕັ້ງພຣະວິຫານຂອງພຣະເຈົ້ານັ້ນ ໝາຍເຖິງ*ຊັ້ນຮຽນພຣະຄຳພີຂອງຄະນະເມທໍດິສ*."[12] *{GC 360.1}*

ໃນໄລຍະເວລາ 24 ປີ ລະຫວ່າງ 1821 ເຖິງ 1845, ອາຈານວໍຟ໌ໄດ້ເດີນທາງໄປຍັງຫຼາຍບ່ອນໃນທະວີບອາຟຣິກາ ໂດຍສະເພາະການຢ້ຽມຢາມປະເທດເອຢິບ ແລະ ປະເທດເອທິໂອເປຍ. ເພີ່ນຍັງໄດ້ເດີນທາງທົ່ວປາແລັດສະໄຕ, ຊີເຣຍ, ເປີເຊຍ, ເຂດເມືອງບູຄາຣາ ແລະ ອິນເດຍໃນທະວີບອາຊີ. ເພີ່ນຍັງໄດ້ຢ້ຽມຢາມສະຫະລັດອາເມຣິກາ ແລະ ໄດ້ແວ່ເທດສະໜາຢູ່ເກາະ ເຊນ ເຮເລນາ. ເພີ່ນໄປຮອດນະຄອນນິວຢອກໃນເດືອນສິງຫາປີ 1837 ແລະ ຫຼັງຈາກເທດສະໜາໃນເມືອງນັ້ນ ເພີ່ນກໍໄປເທດສະໜາຕໍ່ຢູ່ເມືອງຟີລາເດັນເຟຍ ແລະ ເມືອງບາວຕິມໍ, ແລ້ວໃນທີ່ສຸດກໍເດີນທາງໄປເຖິງນະຄອນວໍຊິງຕັນ. ໃນສະຖານທີ່ດັ່ງກ່າວເພີ່ນໄດ້ກ່າວວ່າ: "ອະດີດປະທານາທິບໍດີ ທ່ານ ຈອນ ຄວິນຊີ ອາດາມ ໄດ້ສະເໜີຍັດຕີໃນສະພາແຫ່ງຊາດ ແລະ ມີການລົງມະຕິເປັນເອກະສັນໃຫ້ຂ້າພະເຈົ້າໃຊ້ຫ້ອງປະຊຸມຂອງສະພາ ເພື່ອກ່າວປາຖະກະຖາ, ເຊິ່ງຂ້າພະເຈົ້າໄດ້ກ່າວໄວ້ໃນວັນເສົາໜຶ່ງ ແລະ ໄດ້ຮັບກຽດໂດຍທີ່ສະມາຊິກສະພາທຸກຄົນເຂົ້າມາຟັງ ພ້ອມດ້ວຍເຈົ້າຄະນະລັດເວີຈີເນຍ, ພວກສາສະໜາຈານ ແລະ ປະຊາຊົນຊາວນະຄອນວໍຊິງຕັນ. ສະມາຊິກຝ່າຍປົກຄອງລັດນິວເຈີຊີ ແລະ ລັດເພັນໂຊເວເນຍໃຫ້ກຽດຂ້າພະເຈົ້າເຊັ່ນກັນ ແລະ ຂ້າພະເຈົ້າໄດ້ກ່າວປາຖະກະຖາກ່ຽວກັບການຄົ້ນຄວ້າຂອງຂ້າພະເຈົ້າຢູ່ໃນອາຊີ ແລະ ກ່ຽວກັບການຄອບຄອງຂອງພຣະເຢຊູຄຣິສໂດຍພຣະອົງເອງ."[13] *{GC 360.2}*

ດຣ. ວໍຟ໌ ໄດ້ເດີນທາງໄປໃນປະເທດທີ່ປ່າເຖື່ອນທີ່ສຸດ ໂດຍບໍ່ມີການປົກປ້ອງຄຸ້ມຄອງຈາກລັດຖະບານໃດຂອງເອີຣົບ; ເພີ່ນຕ້ອງທົນຕໍ່ຄວາມທຸກຍາກຫຼາຍປະການ ແລະ ຕ້ອງປະເຊີນກັບໄພອັນຕະລາຍ

[11] *ການຄົ້ນຄວ້າ ແລະ ອຸທາຫານການປະກາດຂອງ ໂຈເຊັບ ວໍຟ໌*, ໜ້າ 404, 405.

[12] *ບັນທຶກຂອງ ອາຈານ ໂຈເຊັບ ວໍຟ໌*, ໜ້າ 96.

[13] *ອ້າງອີງຈາກທີ່ດຽວກັນ*, ໜ້າ 398, 399.

ນັບບໍ່ຖ້ວນ. ເພິ່ນຖືກຂ້ຽນທີ່ຝ່າຕີນ, ຖືກບັງຄັບໃຫ້ອົດເຂົ້າ, ຖືກຂາຍເປັນທາດ ແລະ ຖືກຕັດສິນປະຫານຊີວິດເຖິງສາມຄັ້ງ. ເພິ່ນຖືກໂຈນປຸ້ນ ແລະ ເກືອບຕາຍຍ້ອນຂາດນ້ຳບໍ່ແມ່ນເທື່ອດຽວ. ມີຄັ້ງໜຶ່ງໂຈນປຸ້ນເອົາຊັບສິນໄປໝົດ ເຫຼືອແຕ່ຕົວເພິ່ນທີ່ຕ້ອງຍ່າງຕີນເປົ່າຫຼາຍຮ້ອຍໄມຜ່ານພູເຂົາຕ່າງ ໆ, ລົມພັດຫິມະຕີໃສ່ໜ້າ ແລະ ຕີນອັນເປື່ອຍເປົ່າຂອງເພິ່ນເຢັນຊາ ຍ້ອນຕ້ອງຢຽບພື້ນດິນທີ່ແຂງເປັນນ້ຳກ້ອນ. *{GC 361.1}*

ເມື່ອມີຄົນເຕືອນເພິ່ນຢ່າຜ່ານພວກຊົນເຜົ່າທີ່ດຸຮ້າຍ ແລະ ປ່າເຖື່ອນໂດຍບໍ່ຖືອາວຸດ, ເພິ່ນຕອບວ່າ ໄດ້ກຽມອາວຸດໄປພ້ອມແລ້ວ ຄື “ການອະທິຖານ, ຄວາມກະຕືລືລົ້ນເພື່ອພຣະຄຣິສ ແລະ ຄວາມໝັ້ນໃຈໃນຄວາມຊ່ວຍເຫຼືອຂອງພຣະອົງ.” “ຂ້າພະເຈົ້າກໍຍັງມີຄວາມຮັກຂອງພຣະເຈົ້າ ແລະ ມີຄວາມຫ່ວງໃຍຕໍ່ເພື່ອນມະນຸດຢູ່ໃນໃຈ ແລະ ມີພຣະຄຳພີຢູ່ໃນມື.”[14] ເພິ່ນຖືພຣະຄຳພີສະບັບພາສາເຮັບເຣີ ແລະ ສະບັບແປພາສາອັງກິດໃນການເດີນທາງທຸກຄັ້ງ. ເພິ່ນໄດ້ກ່າວເຖິງການເດີນທາງໃນໄລຍະຫຼັງ ໆ ວ່າ: “ຂ້າພະເຈົ້າ . . . ຖືພຣະຄຳພີເປີດໄວ້ຢູ່ໃນມື ເພາະຮູ້ສຶກວ່າກຳລັງຂອງຂ້າພະເຈົ້າມາຈາກພຣະຄຳພີ ແລະ ຣິດເດດທີ່ຢູ່ໃນນັ້ນຈະອຸ້ມຊູຂ້າພະເຈົ້າ.”[15] *{GC 361.2}*

ດັ່ງນັ້ນ, ເພິ່ນຈຶ່ງປະກາດຢ່າງພາກພຽນອຸດສາຫະ ຈົນກວ່າເລື່ອງການພິພາກສາຖືກນຳໄປສູ່ຫຼາຍພື້ນທີ່ໃນໂລກ. ເພິ່ນນຳພຣະຄຳຂອງພຣະເຈົ້າໃນພາສາຕ່າງ ໆ ໄປແຈກຢາຍແກ່ຊາວຢິວ, ຊາວເທີກ, ຊາວປາຊີ, ຊາວອິນດູ ພ້ອມດ້ວຍອີກຫຼາຍຊົນຊາດ. ບໍ່ວ່າເພິ່ນຈະໄປບ່ອນໃດ ເພິ່ນກໍປະກາດວ່າ ການສະເດັດມາຄອບຄອງຂອງພຣະເມຊີອາໃກ້ຈະມາເຖິງແລ້ວ. *{GC 361.3}*

ໃນການເດີນທາງຂອງເພິ່ນໃນເຂດເມືອງບູຄາຣາ, ເພິ່ນພົບວ່າ ມີກຸ່ມຄົນທີ່ຢູ່ຫ່າງໄກຈາກຄົນອື່ນ ເຊິ່ງຄົນເຫຼົ່ານັ້ນເຊື່ອວ່າ ການສະເດັດມາຂອງພຣະອົງໃກ້ເຂົ້າມາແລ້ວ. ເພິ່ນກ່າວເຖິງພວກຊາວອາຣັບໃນປະເທດເຢເມນວ່າ, “ພວກເຂົາມີໜັງສືທີ່ເອີ້ນວ່າ *ຊີຣາ* ເຊິ່ງກ່າວເຖິງການສະເດັດມາຄັ້ງທີສອງຂອງພຣະຄຣິສ ແລະ ການຄອບຄອງດ້ວຍສະຫງ່າຣາສີຂອງພຣະອົງ. ພວກເຂົາເຊື່ອວ່າໃນປີ 1840 ຈະເກີດເຫດການຍິ່ງໃຫຍ່.”[16] “ໃນປະເທດເຢເມນ . . . ຂ້າພະເຈົ້າໄດ້ໃຊ້ເວລາ 6 ວັນຢູ່ກັບພົ້ງພັນຂອງເຣກາບ.[17] ພວກເຂົາບໍ່ດື່ມເຫຼົ້າ, ບໍ່ປູກສວນອະງຸ່ນ ແລະ ບໍ່ຫວ່ານເມັດພືດ ແຕ່ອາໄສຢູ່ໃນຜ້າເຕັນ ແລະ ຍັງຈື່ຈຳຫ້າວໂຢນາດາບລູກຊາຍຂອງເຣກາບ. ນອກຈາກນັ້ນ, ຂ້າພະເຈົ້າຍັງໄດ້ພົບເຈົ້ຄົນອິດສະຣາເອນຈາກເຜົ່າດານ . . . ຜູ້ເຊື່ອເໝືອນກັບລູກຫຼານຂອງເຣກາບວ່າ, ໃນບໍ່ຊ້າພຣະເມຊີອາຈະສະເດັດມາພ້ອມກັບໝູ່ເມກແຫ່ງຟ້າສະຫວັນ.”[18] *{GC 361.4}*

ມີຜູ້ປະກາດສາສະໜາຄົນໜຶ່ງພົບວ່າ ໃນດິນແດນຕາຕາຣີກໍມີຄວາມເຊື່ອທີ່ຄ້າຍຄືກັນ. ຜູ້ນຳສາສະໜາຊາວຕາຕ້າຄົນໜຶ່ງຖາມຜູ້ປະກາດຄົນນັ້ນວ່າ ພຣະຄຣິສຈະສະເດັດມາຄັ້ງທີສອງເມື່ອໃດ. ເມື່ອຜູ້ປະກາດຕອບວ່າລາວບໍ່ຮູ້ຫຍັງກ່ຽວກັບເລື່ອງນີ້, ຜູ້ນຳສາສະໜາຄົນນັ້ນມີທ່າທາງຕົກໃຈທີ່ມີອາຈານສອນພຣະຄຳພີທີ່ບໍ່ຮູ້ສິ່ງເຫຼົ່ານີ້, ແລ້ວກໍບອກຄວາມເຊື່ອຂອງຕົນເອງ ເຊິ່ງອີງໃສ່ຄຳພະຍາກອນວ່າ ການສະເດັດມາຂອງພຣະຄຣິສຈະເກີດຂຶ້ນປະມານປີ 1844. *{GC 362.1}*

---

[14] W. H. D. ອາດາມ (Adams), *ການປະເຊີນກັບໄພອັນຕະລາຍຢູ່ເລື້ອຍ ໆ*, ໜ້າ 192.

[15] *ອ້າງອີງຈາກທີ່ດຽວກັນ*, ໜ້າ 201.

[16] *ບັນທຶກຂອງ ອາຈານ ໂຈເຊັບ ວໍຟ໌*, ໜ້າ 377.

[17] ເບິ່ງ ເຢເຣມີຢາ 35:6.

[18] *ອ້າງອີງຈາກທີ່ດຽວກັນ*, ໜ້າ 389.

ປະກາດໃນປະເທດອັງກິດ

ຕັ້ງແຕ່ປີ 1826 ມີການປະກາດເລື່ອງການສະເດັດມາຂອງພຣະຄຣິສຢູ່ໃນປະເທດອັງກິດ. ການປະກາດໃນອັງກິດ ບໍ່ໄດ້ເປັນຮູບເປັນຮ່າງເໝືອນກັບການປະກາດເລື່ອງດັ່ງກ່າວໃນອາເມຣິກາ; ບໍ່ຄ່ອຍມີການເຈາະຈົງເວລາຂອງການສະເດັດມາ, ແຕ່ມີການປະກາດທົ່ວໄປວ່າ ໃກ້ເຖິງເວລາທີ່ຄວາມຈິງອັນສຳຄັນເລື່ອງການສະເດັດມາຂອງພຣະຄຣິສດ້ວຍຣິດທານຸພາບ ແລະ ສະຫງ່າຣາສີຈະເກີດຂຶ້ນ. ທັງນີ້ບໍ່ແມ່ນແຕ່ພວກທີ່ແຍກອອກຈາກຄຣິສຕະຈັກແຫ່ງອັງກິດເທົ່ານັ້ນທີ່ປະກາດເລື່ອງດັ່ງກ່າວ. ນັກຂຽນຊາວອັງກິດຊື່ ໂມຣານ ບຣອກ (Mourant Brock) ກ່າວວ່າ ມີສາສະໜາຈານຂອງຄຣິສຕະຈັກແຫ່ງອັງກິດປະມານ 700 ຄົນທີ່ເຄື່ອນໄຫວປະກາດ “ຂ່າວປະເສີດຂອງຣາຊອານາຈັກນີ້.” (ມັດທາຍ 24:14). ໃນເກາะອັງກິດກໍຍັງມີການປະກາດວ່າ ພຣະຄຣິສຈະສະເດັດມາໃນປີ 1844 ເໝືອນກັນ. ໜັງສືອາລະສານຈາກຄົນທີ່ເຊື່ອເລື່ອງການສະເດັດມາຂອງພຣະເຢຊູຈາກອາເມຣິກາ ກໍໄດ້ຮັບການເຜີຍແຜ່ຢ່າງກວ້າງຂວາງ. ປຶ້ມ ແລະ ອາລະສານໄດ້ຖືກພິມຄືນໃໝ່ໃນອັງກິດ. ສ່ວນ ໂຣເບີດ ວິນເທີ ເປັນຊາວອັງກິດໂດຍກຳເນີດ ແຕ່ໄດ້ຮັບເຊື່ອເລື່ອງການສະເດັດກັບມາຂອງພຣະຄຣິສເມື່ອເພິ່ນຢູ່ອາເມຣິກາ; ໃນປີ 1842 ເພິ່ນຍ້າຍກັບໄປບ້ານເກີດຢູ່ອັງກິດ ແລະ ປະກາດເລື່ອງການສະເດັດກັບມາຂອງອົງພຣະ-ຜູ້ເປັນເຈົ້າ. ມີຫຼາຍຄົນຮ່ວມປະກາດກັບເພິ່ນ ຈົນເລື່ອງການພິພາກສາຖືກປະກາດໃນຂົງເຂດຕ່າງ ໆ ຂອງປະເທດອັງກິດ. *{GC 362.2}*

ທ່ານກາງຄວາມປ່າເຖື່ອນ ແລະ ຄວາມງົມງວາຍຂອງພວກບາດຫຼວງກາໂຕລິກໃນອາເມຣິກາໃຕ້, ທ່ານລາຄູນຊາໄດ້ມາຮູ້ຈັກພຣະຄຳພີ ຈຶ່ງໄດ້ຮຽນຮູ້ເລື່ອງການສະເດັດມາໃນບໍ່ຊ້າຂອງພຣະເຢຊູ. ລາຄູນຊາເປັນຊາວແອັດສະປາຍ ແລະ ເປັນຄະນະສົງເຢຊຸອິດ (Jesuit). ເພິ່ນຮູ້ສຶກວ່າ ຕ້ອງປະກາດຄຳເຕືອນ ແຕ່ໃນຂະນະດຽວກັນກໍຢາກຫຼີກລ່ຽງການຖືກຕຳໜິຈາກໂຣມ; ເພິ່ນຈຶ່ງຂຽນຄວາມຄິດເຫັນໂດຍໃຊ້ນາມປາກກາວ່າ “ຣັບບີ ເບນເອຊຣາ” ແລະ ອ້າງວ່າເປັນຄົນຢິວທີ່ກັບໃຈໃໝ່. ລາຄູນຊາມີຊີວິດຢູ່ໃນສະຕະວັດທີ 18, ແຕ່ປະມານປີ 1825 ມີຄົນນຳໜັງສືຂອງເພິ່ນໄປທີ່ນະຄອນລອນດອນ ແລະ ມີຄົນແປເປັນພາສາອັງກິດ. ໜັງສືດັ່ງກ່າວ ຍິ່ງຊ່ວຍໃຫ້ຄົນອັງກິດສົນໃຈເລື່ອງການສະເດັດມາຄັ້ງທີສອງຂອງພຣະເຢຊູໃຫ້ຫຼາຍຂຶ້ນຕື່ມ. *{GC 363.1}*

ທ່ານເບນເກນພົບຄວາມຈິງ

ໃນປະເທດເຢຍລະມັນໃນຊ່ວງສະຕະວັດທີ 18 ມີອາຈານຄະນະລູເທີແຣນ (Lutheran) ຊື່ ເບນເກນ (Bengel) ໄດ້ສອນເລື່ອງດັ່ງກ່າວ, ເພິ່ນເປັນນັກວິຊາການ ແລະ ເປັນນັກວິເຄາะພຣະຄຳພີທີ່ມີຊື່ສຽງ. ເມື່ອເພິ່ນຈົບການສຶກສາແລ້ວ ເພິ່ນ “ອຸທິດຕົນໃນການສຶກສາສາສະໜາສາດ, ເຊິ່ງການຄົ້ນຄວ້າດັ່ງກ່າວ ກໍເໝາะສົມກັບບຸກຄະລິກທີ່ຈິງຈັງ ແລະ ມັກເລື່ອງສາສະໜາຂອງເພິ່ນ ແລະ ກໍກົງກັບການສຶກສາຮ່ຳຮຽນໃນໄວໜຸ່ມ. ເຊັ່ນດຽວກັບຊາຍໜຸ່ມຄົນອື່ນ ໆ ທີ່ມີຄວາມຄິດເລິກເຊິ່ງ, ເພິ່ນກໍຕ້ອງຕໍ່ສູ້ກັບຄວາມສົງໄສ ແລະ ເລື່ອງທີ່ເຂົ້າໃຈຍາກໃນສາສະໜາ; ເພິ່ນກ່າວເຖິງເລື່ອງນີ້ດ້ວຍຄວາມຈິງໃຈວ່າ: ‘ລູກທະນູຫຼາຍອັນໄດ້ເຈາะແທງຫົວໃຈຂ້າພະເຈົ້າ ເຮັດໃຫ້ຊ່ວງໄວໜຸ່ມຍາກທີ່ຈະທົນໄດ້.’” ເມື່ອເພິ່ນມາເປັນສະມາຊິກສະພາສາສະໜາແຫ່ງແຂວງເວີດເທັມເບີກ (Württemberg) ເພິ່ນໄດ້ສົ່ງເສີມເລື່ອງເສລີພາບທາງສາສະໜາ. “ໃນຂະນະທີ່ສອນເຖິງສິດທິຂອງຄຣິສຕະຈັກ, ເພິ່ນຍັງ

ສະໜັບສະໜູນໃຫ້ຄົນມີເສລີພາບໃນການຖອນຕົວອອກຈາກຄຣິສຕະຈັກ ຖ້າຫາກວ່າເປັນເລື່ອງຂອງຈິດສຳນຶກຜິດຊອບ."[19] ແຂວງຂອງເພິ່ນຍັງໄດ້ຮັບຜົນດີຈາກນະໂຍບາຍດັ່ງກ່າວຈົນທຸກມື້ນີ້. *{GC 363.2}*

ຂະນະທີ່ເບນເກນກຳລັງກຽມເລື່ອງໃນພຣະນິມິດບົດທີ 21 ເພື່ອຈະເທດສະໜາໃນໂອກາດການສະຫຼອງການສະເດັດມາຄັ້ງທີໜຶ່ງຂອງພຣະຄຣິສ, ເພິ່ນພັດເຂົ້າໃຈຢ່າງເລິກເຊິ່ງເຖິງເລື່ອງການສະເດັດມາຄັ້ງທີສອງຂອງພຣະອົງ. ເພິ່ນເຂົ້າໃຈຄຳພະຍາກອນໃນພຣະທຳພຣະນິມິດຢ່າງທີ່ບໍ່ເຄີຍເຂົ້າໃຈມາກ່ອນ. ຂະນະທີ່ໄຄ່ຄວນເຖິງຄວາມສຳຄັນ ແລະ ສະຫງ່າຣາສີທີ່ຜູ້ເຜີຍພຣະທຳກ່າວເຖິງນັ້ນ ເພິ່ນມີຄວາມຮູ້ສຶກເຕັມລົ້ນຫົວໃຈຈົນອຶ້ງໄປ ແລະ ຕ້ອງພັກການສຶກສາເລື່ອງນີ້ໄປຊົ່ວຄາວ. ເມື່ອເພິ່ນກຳລັງເທດສະໜາຢູ່ນັ້ນ ພາບດັ່ງກ່າວກໍປາກົດຢູ່ໃນໃຈຢ່າງຈະແຈ້ງພ້ອມດ້ວຍຣິດອຳນາດ. ຕັ້ງແຕ່ນັ້ນມາ, ເພິ່ນກໍໄດ້ອຸທິດຕົນໃນການສຶກສາຄຳພະຍາກອນ ໂດຍສະເພາະພຣະທຳພຣະນິມິດ; ໃນບໍ່ຊ້າເພິ່ນກໍມາເຖິງຂໍ້ສະຫຼຸບທີ່ວ່າ ຄຳພະຍາກອນຊີ້ໃຫ້ເຫັນວ່າ ການສະເດັດມາຂອງພຣະຄຣິສໃກ້ແລ້ວ, ເຊິ່ງເວລາທີ່ເພິ່ນຄິດວ່າພຣະອົງຈະສະເດັດມານັ້ນ ກໍໃກ້ຄຽງກັບເວລາທີ່ມິນເລີໄດ້ລະບຸໄວ້ໃນເວລາຕໍ່ມາ. *{GC 363.3}*

ງານຂຽນຂອງເບນເກນ ໄດ້ຮັບການແຜ່ກະຈາຍໄປໃນທຸກປະເທດທີ່ຄົນສ່ວນໃຫຍ່ນັບຖືສາສະໜາຄຣິສ. ຄວາມຄິດເຫັນຂອງເພິ່ນກ່ຽວກັບຄຳພະຍາກອນ ກໍເປັນທີ່ຍອມຮັບກັນໂດຍທົ່ວໄປໃນແຂວງເວີດເທັມເບີກ ບ່ອນທີ່ເປັນບ້ານເກີດຂອງເພິ່ນ ແລະ ກໍຍັງເປັນທີ່ຍອມຮັບສ່ວນໜຶ່ງໃນຂົງເຂດອື່ນໆຂອງປະເທດເຢຍລະມັນ. ການເຄື່ອນໄຫວປະກາດເລື່ອງການສະເດັດມາຂອງພຣະຄຣິສ ຍັງໄດ້ສືບຕໍ່ຫຼັງຈາກເພິ່ນເສຍຊີວິດ; ຂ່າວເລື່ອງດັ່ງກ່າວຈຶ່ງຖືກປະກາດໄປທົ່ວເຢຍລະມັນ ໃນຂະນະທີ່ຄົນໃນປະເທດອື່ນໆກຳລັງໃຫ້ຄວາມສົນໃຈເຖິງເລື່ອງນີ້ເໝືອນກັນ. ບໍ່ດົນຫຼັງຈາກມີການເລີ່ມປະກາດເລື່ອງດັ່ງກ່າວ ມີຜູ້ເຊື່ອບາງຄົນໄດ້ໄປຕັ້ງຊຸມຊົນໃນປະເທດຣັດເຊຍ; ທຸກວັນນີ້, ຄຣິສຕະຈັກຂອງຊາວເຢຍລະມັນໃນປະເທດຣັດເຊຍ ຍັງເຊື່ອວ່າການສະເດັດກັບມາຂອງພຣະຄຣິສໃກ້ເຂົ້າມາແລ້ວ. *{GC 364.1}*

ແສງສະຫວ່າງຂອງເລື່ອງດັ່ງກ່າວ ໄດ້ສ່ອງຢູ່ໃນປະເທດຝຣັ່ງ ແລະ ສວິສເຊີແລນເຊັ່ນກັນ. ໃນນະຄອນເຈນີວາເຊິ່ງເປັນບ່ອນທີ່ແຟໂຣ ແລະ ຄາວິນສອນເລື່ອງການປະຕິຮູບສາສະໜາ, ອາຈານໂກເຊັນໄດ້ເທດສະໜາເລື່ອງການສະເດັດມາຄັ້ງທີສອງຂອງພຣະຄຣິສ. ໃນຂະນະທີ່ຍັງເປັນນັກສຶກສາຢູ່ ໂກເຊັນໄດ້ພົບກັບລັດທິເທດຜົນນິຍົມ ທີ່ລະບາດຢູ່ທົ່ວເອີຣົບໃນປາຍສະຕະວັດທີ 18 ແລະ ຕົ້ນສະຕະວັດທີ 19; ສະນັ້ນ, ເມື່ອເພິ່ນເລີ່ມວຽກງານສາສະໜາຈານ ເພິ່ນບໍ່ຮູ້ຈັກຫຼັກຄວາມເຊື່ອທີ່ແທ້ຈິງ ແລະ ມີແນວໂນ້ມທີ່ຈະບໍ່ເຊື່ອໃນພຣະຄຳພີ. ໃນໄວໜຸ່ມເພິ່ນສົນໃຈເລື່ອງຄຳພະຍາກອນ; ຫຼັງຈາກໄດ້ອ່ານໜັງສື *ປະຫວັດສາດສະໄໝບູຮານ* ຂອງທ່ານໂຣລິນແລ້ວ, ເພິ່ນມາສົນໃຈພຣະທຳດານີເອນບົດທີສອງ ແລະ ຮູ້ສຶກປະຫຼາດໃຈ ທີ່ຄຳພະຍາກອນສຳເລັດຢ່າງຖືກຕ້ອງຖ້ວນກັ່ງກັບການບັນທຶກຂອງປະຫວັດສາດ. ນີ້ແມ່ນຫຼັກຖານວ່າ ພຣະຄຳພີໄດ້ຮັບການດົນໃຈຈາກພຣະເຈົ້າ ແລະ ເປັນສິ່ງທີ່ໜ່ວງຄວາມເຊື່ອຂອງເພິ່ນໄວ້ ເມື່ອຕ້ອງປະເຊີນກັບອັນຕະລາຍໃນຫຼາຍປີຕໍ່ມາ. ເພິ່ນຮູ້ສຶກບໍ່ອີ່ມໃຈກັບຄຳສອນຂອງລັດທິເທດຜົນນິຍົມ ຈຶ່ງຄົ້ນຄວ້າພຣະຄຳພີ ແລະ ຄົ້ນຫາແສງສະຫວ່າງເພີ່ມເຕີມ ຈົນໃນທີ່ສຸດໄດ້ພົບກັບຄວາມເຊື່ອສັດທາທີ່ແທ້ຈິງ. *{GC 364.2}*

ໃນຂະນະທີ່ສຶກສາຄຳພະຍາກອນ, ເພິ່ນຈຶ່ງມາເຖິງຄວາມເຊື່ອວ່າ ການສະເດັດມາຂອງພຣະຄຣິສໃກ້ເຂົ້າມາແລ້ວ. ໂກເຊັນຮູ້ສຶກວ່າຄວາມຈິງເລື່ອງນີ້ສຳຄັນຫຼາຍ ຈຶ່ງຄິດຢາກນຳໄປປະກາດໃຫ້ຄົນທັງຫຼາຍໄດ້ຮັບຮູ້, ແຕ່ມີອຸປະສັກຢູ່ຂໍ້ໜຶ່ງຄື ຄົນສ່ວນໃຫຍ່ໃນສະໄໝນັ້ນເຊື່ອວ່າ ຄຳພະຍາກອນໃນພຣະທຳດານີເອນ

[19] *ສາລານຸກົມ ບຣິຕັນນິກາ* (Encyclopaedia Britannica), ຫົວຂໍ້ "Bengel." ຕີພິມຄັ້ງທີ 9.

ເປັນເລື່ອງທີ່ເລິກລັບ ແລະ ບໍ່ສາມາດເຂົ້າໃຈໄດ້. ໃນທີ່ສຸດເພິ່ນກໍຕັ້ງໃຈວ່າ ຈະເຮັດຕາມວິທີຂອງແຟໂຣ ທີ່ປະກາດໃນນະຄອນເຈນີວາ; ຄືຈະເລີ່ມຕົ້ນກັບພວກເດັກນ້ອຍ ໂດຍຫວັງວ່າຈະເປັນຫົນທາງໃຫ້ພໍ່ແມ່ ສົນໃຈ. {GC 364.3}

ຕໍ່ມາເພິ່ນກ່າວເຖິງຈຸດປະສົງຂອງການປະກາດວ່າ: “ຂ້າພະເຈົ້າຢາກໃຫ້ທຸກຄົນເຂົ້າໃຈວ່າ ທີ່ ຂ້າພະເຈົ້າເອົາເລື່ອງດັ່ງກ່າວມາສອນເດັກນ້ອຍນັ້ນ ບໍ່ແມ່ນຍ້ອນວ່າມັນເປັນເລື່ອງທີ່ບໍ່ຄ່ອຍສຳຄັນ, ແຕ່ ກົງກັນຂ້າມ ຍ້ອນວ່າມັນສຳຄັນຫຼາຍທີ່ສຸດ. ຂ້າພະເຈົ້າປາຖະໜາໃຫ້ຄົນຟັງຂ້າພະເຈົ້າ ແຕ່ຢ້ານ ວ່າຈະບໍ່ມີໃຜຟັງຖ້າເລີ່ມຕົ້ນດ້ວຍການເວົ້າໃຫ້ຜູ້ໃຫຍ່ກ່ອນ.” “ສະນັ້ນ, ຂ້າພະເຈົ້າຈຶ່ງຕັ້ງໃຈໄປຫາ ຄົນທີ່ອາຍຸນ້ອຍທີ່ສຸດ ໂດຍເຕົ້າໂຮມເດັກນ້ອຍກຸ່ມໜຶ່ງ. ຖ້າກຸ່ມນັ້ນຂະຫຍາຍ, ມີຄົນເຂົ້າມາຟັງ ເພີ່ມ ແລະ ມີຄົນສັງເກດວ່າຄົນຟັງເຫຼົ່ານັ້ນສົນໃຈ ແລະ ເຂົ້າໃຈ ທັງສາມາດອະທິບາຍໃຫ້ຄົນ ອື່ນໄດ້ດ້ວຍ, ຂ້າພະເຈົ້າຈຶ່ງໝັ້ນໃຈວ່າໃນບໍ່ຊ້າຈະມີກຸ່ມທີສອງທີ່ຢາກຟັງ; ແລ້ວໃນທີ່ສຸດກໍຈະມີຜູ້ ໃຫຍ່ເຫັນວ່າ ເລື່ອງທີ່ສອນນັ້ນມີຄຸນຄ່າພໍທີ່ຈະນັ່ງລົງສຶກສານຳ. ໂດຍວິທີນີ້ແຫຼະການປະກາດຈຶ່ງໄດ້ ຜົນ.”[20] {GC 365.1}

ຄວາມພະຍາຍາມຂອງເພິ່ນປະສົບຜົນສຳເລັດ. ໃນຂະນະທີ່ສອນພວກເດັກນ້ອຍ, ມີຜູ້ໃຫຍ່ມາຟັງ ນຳ, ຈົນລະບຽງໂບດຂອງເພິ່ນເຕັມໄປດ້ວຍຄົນທີ່ຢາກຟັງ. ທ່າມກາງຄົນທີ່ໄປຟັງນັ້ນ ກໍມີຄົນທີ່ມີ ຕຳແໜ່ງ ແລະ ມີການສຶກສາສູງ; ນອກຈາກນັ້ນ, ກໍມີຄົນຈາກເມືອງອື່ນ ແລະ ຈາກຕ່າງປະເທດທີ່ ເດີນທາງໄປຢາມນະຄອນເຈນີວາ; ສະນັ້ນ, ຄຳສອນເລື່ອງການສະເດັດມາຂອງພຣະຄຣິສ ຈຶ່ງຖືກນຳໄປ ປະກາດຢູ່ໃນຂົງເຂດອື່ນໆ. {GC 365.2}

ເມື່ອໄດ້ຮັບຜົນສຳເລັດເຊັ່ນນີ້ ໂກເຊັນກໍມີກຳລັງໃຈຂຶ້ນ ຈຶ່ງເອົາບົດຮຽນຂອງຕົນໄປຕີພິມ ດ້ວຍ ຄວາມຫວັງວ່າ ຈະສົ່ງເສີມການສຶກສາເລື່ອງຄຳພະຍາກອນໃນຄຣິສຕະຈັກທີ່ໃຊ້ພາສາຝຣັ່ງ. ເພິ່ນກ່າວ ວ່າ: “ການພິມຄຳສອນໃຫ້ກັບເດັກນ້ອຍນັ້ນ ເປັນການປະກາດໃຫ້ຜູ້ໃຫຍ່ທີ່ບໍ່ໃສ່ໃຈຄຳພະຍາກອນ ເພາະ ເຊື່ອວ່າເປັນເລື່ອງທີ່ເລິກລັບເຂົ້າໃຈບໍ່ໄດ້; ‘ແຕ່ມັນຈະເລິກລັບໄດ້ແນວໃດ ໃນເມື່ອຂະໜາດລູກຫຼານຂອງ ເຈົ້າກໍຍັງສາມາດອ່ານເຂົ້າໃຈໄດ້?’” ເພິ່ນຍັງກ່າວຕື່ມວ່າ, “ຂ້າພະເຈົ້າມີຄວາມປາຖະໜາຢ່າງຍິ່ງທີ່ຈະ ໃຫ້ຄວາມຮູ້ໃນຄຳພະຍາກອນ ກາຍເປັນເລື່ອງທີ່ຄົນໃນຄຣິສຕະຈັກຂອງພວກເຮົານິຍົມຊົມຊອບ, ຖ້າ ເປັນໄປໄດ້.” “ແທ້ຈິງແລ້ວ ບໍ່ມີປະເດັນອື່ນໃດເລີຍ ທີ່ຕອບສະໜອງຕໍ່ຄວາມຕ້ອງການຂອງຍຸກສະໄໝ ປັດຈຸບັນເທົ່າກັບເລື່ອງນີ້.” “ດ້ວຍວິທີນີ້ເອງ, ເຮົາຈຶ່ງຈະກຽມພ້ອມສຳລັບຄວາມທຸກຍາກລຳບາກທີ່ໃກ້ຈະ ມາເຖິງ ໃນຂະນະທີ່ເຝົ້າລໍຄອຍການສະເດັດມາຂອງພຣະເຢຊູຄຣິສ.” {GC 365.3}

ເຖິງແມ່ນວ່າໂກເຊັນເປັນສາສະໜາຈານທີ່ໂດດເດັ່ນ ແລະ ເປັນທີ່ຮັກແພງຫຼາຍທີ່ສຸດໃນທ່າມກາງ ຄົນເວົ້າພາສາຝຣັ່ງ, ແຕ່ໃນທີ່ສຸດເພິ່ນກໍຖືກພັກຈາກການເປັນສາສະໜາຈານຊົ່ວຄາວ ໂດຍມີສາເຫດ ວ່າ ເພິ່ນໃຊ້ພຣະຄຳພີໃນການສອນເດັກນ້ອຍ ແລະ ຊາວໜຸ່ມ ແທນທີ່ຈະໃຊ້ຄູ່ມືຫຼັກຂໍ້ເຊື່ອຂອງ ຄຣິສຕະຈັກ. ຄວາມຈິງແລ້ວ, ຄູ່ມືຫຼັກຂໍ້ເຊື່ອດັ່ງກ່າວ ເກືອບຈະບໍ່ມີອາຫານຝ່າຍຈິດວິນຍານໃຫ້ຜູ້ ອ່ານເກີດຄວາມເຊື່ອທີ່ແທ້ຈິງ. ຕໍ່ມາ, ໂກເຊັນໄດ້ມາເປັນອາຈານໃນວິທະຍາໄລສາສະໜາສາດ, ແຕ່ ໃນວັນອາທິດເພິ່ນຍັງສືບຕໍ່ສອນເດັກນ້ອຍ ແລະ ຊາວໜຸ່ມໃຫ້ຮູ້ພຣະຄຳພີ. ການປະກາດຂອງເພິ່ນ ເລື່ອງຄຳພະຍາກອນ ກໍຍັງໄດ້ຮັບຄວາມສົນໃຈຢ່າງກວ້າງຂວາງ. ເພິ່ນເຮັດວຽກຕໍ່ເນື່ອງຫຼາຍປີໃນຖານະ ສາດສະດາຈານ, ຜ່ານສິ່ງຕີພິມ ແລະ ໃນການສອນເດັກນ້ອຍອັນເປັນບົດບາດທີ່ເພິ່ນມັກຫຼາຍທີ່ສຸດ, ເພິ່ນຈຶ່ງມີສ່ວນສຳຄັນໃນການຮຽກເອີ້ນຫຼາຍຄົນ ໃຫ້ມາສົນໃຈໃນການສຶກສາຄຳພະຍາກອນ ທີ່ສະແດງ ໃຫ້ເຫັນວ່າ ການສະເດັດມາຂອງພຣະຄຣິສໃກ້ເຂົ້າມາແລ້ວ. {GC 366.1}

[20] ແອວ. ໂກເຊັນ (L. Gaussen), *ຜູ້ເຜີຍພຣະທຳດານີເອນ*, ເຫຼັ້ມ 2, ຄຳນຳ.

ເດັກນ້ອຍປະກາດໃນສະແກນດິເນເວຍ

ຂ່າວເລື່ອງການສະເດັດມາຂອງພຣະຄຣິສ ຍັງໄດ້ຮັບການປະກາດໃນດິນແດນສະແກນດິເນເວຍ ແລະ ມີຄົນສົນໃຈຢ່າງກວ້າງຂວາງ. ມີຫຼາຍຄົນຕື່ນຈາກການຫຼັບໄຫຼ ມາສາລະພາບ ແລະ ປະຖິ້ມ ຄວາມບາບ ແລ້ວສະແຫວງຫາການອະໄພບາບ ໂດຍຜ່ານພຣະນາມຂອງພຣະຄຣິສ. ແຕ່ພວກ ສາສະໜາຈານຂອງຄຣິສຕະຈັກແຫ່ງຊາດ ໄດ້ຕໍ່ຕ້ານການສອນດັ່ງກ່າວ ແລະ ໂດຍອິດທິພົນຂອງ ອາຈານເຫຼົ່ານັ້ນ ມີບາງຄົນທີ່ປະກາດຂ່າວເລື່ອງການສະເດັດມາຖືກຈັບຂັງຄຸກ. ໃນຫຼາຍບ່ອນທີ່ຜູ້ສອນ ຖືກຈັບ, ພຣະເຈົ້າຊົງໂຜດໃຫ້ເກີດເລື່ອງອັດສະຈັນ ໂດຍມີເດັກນ້ອຍປະກາດວ່າ ພຣະເຢຊູໃກ້ຈະສະເດັດ ກັບມາ. ເນື່ອງຈາກເດັກນ້ອຍເຫຼົ່ານັ້ນຍັງບໍ່ບັນລຸນິຕິພາວະ ບໍ່ມີກົດໝາຍຫ້າມພວກເຂົາໄດ້; ທາງການ ຈຶ່ງຍອມໃຫ້ພວກເດັກນ້ອຍປະກາດໂດຍບໍ່ມີຜູ້ໃດຂັດຂວາງ. *{GC 366.2}*

ການປະກາດນັ້ນສ່ວນໃຫຍ່ຢູ່ທ່າມກາງຄົນຊັ້ນລຸ່ມ; ສະນັ້ນ, ປະຊາຊົນຈຶ່ງມາຟັງຄຳປະກາດເຕືອນ ໃນບ້ານເຮືອນຂອງຄົນຊັ້ນກຳມະກອນ. ພວກເດັກນ້ອຍນັກເທດເຫຼົ່ານັ້ນສ່ວນໃຫຍ່ກໍເປັນຄົນຍາກຈົນຄື ກັນ. ບາງຄົນອາຍຸບໍ່ເກີນ 6 ຫຼື 8 ປີ; ຊີວິດຂອງເດັກນ້ອຍເຫຼົ່ານີ້ສະແດງໃຫ້ເຫັນວ່າ ພວກເຂົາຮັກ ພຣະເຢຊູ ແລະ ພະຍາຍາມດຳເນີນຊີວິດດ້ວຍການເຊື່ອຟັງຕາມຂໍ້ກຳນົດອັນບໍຣິສຸດຂອງພຣະອົງ. ຕາມ ປົກກະຕິ, ພວກເຂົາກໍມີສະຕິປັນຍາ ແລະ ຄວາມສາມາດທີ່ກົງກັບອາຍຸ; ແຕ່ເມື່ອຢືນຂຶ້ນຕໍ່ໜ້າ ຄົນທັງຫຼາຍ ກໍປາກົດຢ່າງຈະແຈ້ງວ່າ ພວກເຂົາໄດ້ຮັບການດົນໃຈທີ່ເກີນຄວາມສາມາດທີ່ມີຕາມ ທຳມະຊາດ. ນ້ຳສຽງ ແລະ ທ່າທາງຂອງເດັກເຫຼົ່ານັ້ນປ່ຽນໄປ ແລະ ພວກເຂົາໄດ້ເຕືອນເລື່ອງການ ພິພາກສາດ້ວຍພະລັງ ໂດຍໃຊ້ຖ້ອຍຄຳຈາກພຣະຄຳພີວ່າ: “ຈົ່ງຢຳເກງພຣະເຈົ້າ ແລະ ຍົກຍ້ອງໃຫ້ກຽດ ແກ່ພຣະອົງ ເພາະເຖິງເວລາແລ້ວທີ່ພຣະອົງຈະຕັດສິນມະນຸດສະໂລກ.” (ພຣະນິມິດ 14:7). ພວກເຂົາ ຕັກເຕືອນເລື່ອງຄວາມບາບຂອງປະຊາຊົນ, ບໍ່ພຽງແຕ່ເລື່ອງທີ່ຜິດສິນທຳ ແຕ່ໄດ້ປະນາມການເປັນມິດ ກັບໂລກ ແລະ ການຫຼົງຈາກຄວາມເຊື່ອດ້ວຍ, ທັງໄດ້ເຕືອນຜູ້ຟັງຂອງພວກເຂົາ ໃຫ້ໜີຢ່າງຮີບດ່ວນ ຈາກພຣະພິໂຣດທີ່ຈະມາເຖິງ. *{GC 366.3}*

ປະຊາຊົນຮັບຟັງດ້ວຍທ່າທີອົກສັ່ນຂວັນຫາຍ; ພຣະວິນຍານຊົງດົນໃຈພວກເຂົາໃຫ້ສຳນຶກຂຶ້ນໃນ ໃຈ. ຫຼາຍຄົນຫັນມາຄົ້ນຄວ້າພຣະຄຳພີ ດ້ວຍຄວາມສົນໃຈອັນເລິກເຊິ່ງຢ່າງທີ່ບໍ່ເຄີຍມີມາກ່ອນ; ຄົນ ທີ່ກິນເຫຼົ້າ ແລະ ຄົນຜິດສິນທຳໄດ້ຮັບການປ່ຽນແປງໃໝ່; ບາງຄົນເລີກການປະຕິບັດທີ່ບໍ່ສັດຊື່. ຜົນ ຂອງການປະກາດນັ້ນໂດດເດັ່ນຈົນແມ່ນແຕ່ພວກສາສະໜາຈານຂອງຄຣິສຕະຈັກແຫ່ງຊາດຕ້ອງຍອມຮັບ ວ່າ ພຣະເຈົ້າຊົງນຳໃນການປະກາດດັ່ງກ່າວ. *{GC 367.1}*

ພຣະເຈົ້າມີພຣະປະສົງໃຫ້ຂ່າວເລື່ອງການສະເດັດມາຂອງພຣະຜູ້ຊ່ວຍໃຫ້ລອດ ໄດ້ຮັບການປະກາດ ໃນປະເທດທັງຫຼາຍຂອງສະແກນດິເນເວຍ; ເມື່ອຜູ້ຮັບໃຊ້ຂອງພຣະອົງຖືກຫ້າມບໍ່ໃຫ້ເວົ້າ, ພຣະອົງ ຈຶ່ງປະທານພຣະວິນຍານຂອງພຣະອົງໃຫ້ແກ່ພວກເດັກນ້ອຍ ເພື່ອໃຫ້ການປະກາດນັ້ນສຳເລັດ. ຄັ້ງ ທີ່ພຣະເຢຊູສະເດັດເຂົ້າໃກ້ນະຄອນເຢຣູຊາເລັມ ພ້ອມຝູງຊົນທີ່ໂຮ່ຮ້ອງສະຫຼອງໄຊດ້ວຍຄວາມຍິນດີ ແລະ ການໂບກກ້ານຕານເພື່ອປະກາດພຣະອົງໃນຖານະບຸດຂອງດາວິດນັ້ນ, ພວກຟາຣີຊາຍຂໍໃຫ້ ພຣະອົງບອກປະຊາຊົນໃຫ້ມິດງຽບສາ, ແຕ່ພຣະເຢຊູຊົງຕອບພວກເຂົາວ່າ ສິ່ງທີ່ເກີດຂຶ້ນນັ້ນເປັນໄປຕາມ ຄຳພະຍາກອນ ແລະ ຖ້າຄົນເຫຼົ່ານີ້ຢຸດຮ້ອງ ພວກກ້ອນຫີນຈະຮ້ອງຂຶ້ນມາເອງ. ປະຊາຊົນຢ້ານການ ຂົ່ມຂູ່ຂອງພວກປະໂຣຫິດ ແລະ ພວກຜູ້ປົກຄອງ ຈຶ່ງຢຸຕິການໂຮ່ຮ້ອງນັ້ນໃນຂະນະທີ່ພວກເຂົາເດີນຜ່ານ ປະຕູເຂົ້າໄປໃນນະຄອນເຢຣູຊາເລັມ; ແຕ່ຫຼັງຈາກນັ້ນ, ພວກເດັກນ້ອຍໄດ້ຮ້ອງໃນເດີ່ນພຣະວິຫານ ໃນ ຂະນະທີ່ໂບກກ້ານຕານໄປມາວ່າ: “ໂຮຊັນນາແດ່ບຸດດາວິດ!” ເມື່ອພວກຟາຣີຊາຍກ່າວແກ່ພຣະເຢຊູດ້ວຍ

ຄວາມຊຸ່ນເຄືອງໃຈວ່າ: “ເຈົ້າໄດ້ຍິນຄຳທີ່ພວກເຂົາກຳລັງຮ້ອງນັ້ນບໍ?” ພຣະເຢຊູຊົງຕອບວ່າ: “ໄດ້ຍິນ ແລ້ວ. ພວກເຈົ້າບໍ່ເຄີຍອ່ານຈັກເທື່ອບໍໃນຄຳທີ່ວ່າ, ‘ພຣະອົງຊົງຈັດໃຫ້ຄຳສັນລະເສີນອັນແທ້ຈິງ ອອກ ມາຈາກປາກຂອງເດັກນ້ອຍອ່ອນ ແລະ ຜູ້ທີ່ຍັງກິນນ້ຳນົມຢູ່.’” (ມັດທາຍ 21:8–16). ພຣະເຈົ້າຊົງໃຊ້ ເດັກນ້ອຍໃນສະໄໝທີ່ພຣະຄຣິສສະເດັດມາຄັ້ງທຳອິດຢ່າງໃດ ພຣະອົງກໍຊົງໃຊ້ເດັກນ້ອຍໃນການປະກາດ ການສະເດັດມາຄັ້ງທີສອງຂອງພຣະອົງຢ່າງນັ້ນ. ພຣະຄຳຂອງພຣະເຈົ້າຈະຕ້ອງສຳເລັດ ເພື່ອໃຫ້ເລື່ອງ ການສະເດັດມາຂອງພຣະຜູ້ຊ່ວຍໃຫ້ລອດໄດ້ຖືກປະກາດໄປຍັງທຸກຊົນຊາດ, ທຸກພາສາ ແລະ ທຸກ ປະເທດ. *{GC 367.2}*

ການປະກາດຂະຫຍາຍວົງກວ້າງ

ພຣະເຈົ້າຊົງມອບວຽກງານການປະກາດເຕືອນຊາວອາເມຣິກາ ໃຫ້ແກ່ທ່ານວິນລຽມ ມິນເລີ ແລະ ຜູ້ຮ່ວມງານກັບເພິ່ນ. ອາເມຣິກາຈຶ່ງກາຍເປັນສູນກາງການປະກາດເລື່ອງການສະເດັດກັບມາຂອງ ພຣະເຢຊູຄຣິສ. ຄຳພະຍາກອນເລື່ອງຂ່າວທູດສະຫວັນອົງທີໜຶ່ງກຳສຳເລັດຫຼາຍທີ່ສຸດໃນອາເມຣິກາ. ວຽກ ຂຽນຂອງມິນເລີ ແລະ ເພື່ອນຮ່ວມງານເຫຼົ່ານັ້ນ ຖືກນຳໄປເຜີຍແຜ່ໃນດິນແດນທີ່ຫ່າງໄກ. ທຸກບ່ອນທົ່ວ ໂລກທີ່ມີຜູ້ປະກາດຂ່າວປະເສີດເຂົ້າໄປເຖິງ ກໍມີຄົນສົ່ງຂ່າວອັນໜ້າຍິນດີກ່ຽວກັບການສະເດັດມາຢ່າງ ໄວວາຂອງພຣະຄຣິສ. ມີການປະກາດຂ່າວປະເສີດອັນເປັນນິຣັນດອນຢ່າງກວ້າງໄກ ພ້ອມດ້ວຍການ ກ່າວວ່າ: “ຈົ່ງຢຳເກງພຣະເຈົ້າ ແລະ ຍົກຍ້ອງໃຫ້ກຽດແກ່ພຣະອົງ ເພາະເຖິງເວລາແລ້ວທີ່ພຣະອົງຈະ ຕັດສິນມະນຸດສະໂລກ.” *{GC 368.1}*

ປະຊາຊົນພາກັນໃສ່ໃຈຢ່າງເລິກເຊິ່ງກັບຄຳພະຍາກອນທີ່ເບິ່ງຄືວ່າ ພຣະຄຣິສຈະສະເດັດມາໃນລະດູ ໃບໄມ້ປົ່ງຂອງປີ 1844. ຂ່າວນີ້ຖືກປະກາດຈາກລັດໜຶ່ງໄປສູ່ອີກລັດໜຶ່ງ ແລະ ທຸກທີ່ທີ່ມີການປະກາດ ນັ້ນ ມີຄົນຕື່ນຕົວຂຶ້ນໃຫ້ຄວາມສົນໃຈ. ຫຼາຍຄົນເຊື່ອໝັ້ນວ່າ ການຄຳນວນເວລາຂອງຄຳພະຍາກອນ ຖືກຕ້ອງ ຈຶ່ງຍອມສະຫຼະຄວາມເຊື່ອຖືເກົ່າທີ່ເຄີຍຍຶດໄວ້ ແລະ ຮັບເອົາຄວາມຈິງດ້ວຍຄວາມຊື່ນບານ. ມີ ສາສະໜາຈານບາງຄົນປະຖິ້ມຄວາມຄິດເຫັນ ແລະ ການຖືຕົວຕາມຄະນະນິກາຍ ແລ້ວສະຫຼະ ເງິນເດືອນ ພ້ອມດ້ວຍຕຳແໜ່ງໃນຄຣິສຕະຈັກ ແລະ ຮ່ວມໃນການປະກາດການສະເດັດມາຂອງ ພຣະເຢຊູ. ຢ່າງໃດກໍຕາມ, ມີສາສະໜາຈານໜ້ອຍຄົນທີ່ຍອມຮັບເອົາຄຳສອນນີ້; ສະນັ້ນ, ການ ເຜີຍແຜ່ເລື່ອງດັ່ງກ່າວສ່ວນໃຫຍ່ ຈຶ່ງຖືກມອບໝາຍໃຫ້ສະມາຊິກທົ່ວໄປ. ຊາວໄຮ່ຊາວນາປະໄຮ່ນາຂອງ ຕົນ, ນາຍຊ່າງປະເຕື່ອງມື, ພໍ່ຄ້າໄດ້ປະສົບຄ້າ ແລະ ຄົນອາຊີບຕ່າງ ໆ ກໍປະຕຳແໜ່ງວຽກງານຂອງ ຕົນ; ເຖິງຢ່າງນັ້ນກໍຕາມ, ຄົນປະກາດຍັງມີໜ້ອຍເມື່ອທຽບໃສ່ວຽກງານທີ່ຕ້ອງເຮັດນັ້ນ. ສະພາບຂອງ ຄຣິສຕະຈັກທີ່ບໍ່ເປັນໄປຕາມລັກສະນະຂອງພຣະເຈົ້າ ແລະ ຊາວໂລກທີ່ຈົມປັກຢູ່ກັບຄວາມຊົ່ວຮ້າຍ ເປັນ ພາລະໜັກສຳລັບຜູ້ເຝົ້າຍາມທີ່ແທ້ຈິງ. ພວກເຂົາຈຶ່ງເຕັມໃຈອົດທົນກັບວຽກງານທີ່ໜັກໜ່ວງ, ຄວາມ ຂັດສົນ ແລະ ຄວາມທຸກທໍລະມານ ເພື່ອຈະໄດ້ຮຽກເອີ້ນມະນຸດໃຫ້ກັບໃຈຮັບຄວາມລອດ. ເຖິງແມ່ນ ຊາຕານຈະຂັດຂວາງ ແຕ່ການປະກາດນັ້ນໄດ້ດຳເນີນໄປຢ່າງຕໍ່ເນື່ອງ ແລະ ມີຫຼາຍໝື່ນຄົນຮັບເຊື່ອ ຄວາມຈິງເລື່ອງການສະເດັດມາຂອງພຣະຄຣິສ. *{GC 368.2}*

“ຈະຕ້ອງເຮັດຢ່າງໃດຈຶ່ງຈະໄດ້ລອດພົ້ນ?”

ຂ່າວທີ່ພິສູດຈິດໃຈໄດ້ຖືກປະກາດໄປທຸກແຫ່ງຫົນເພື່ອເຕືອນຄົນບາບ ທັງຄົນທີ່ເປັນຊາວໂລກ ແລະ ທີ່ເປັນສະມາຊິກຄຣິສຕະຈັກ ໃຫ້ໜີຈາກພຣະພິໂຣດທີ່ຈະມາເຖິງ. ຜູ້ປະກາດເຫຼົ່ານັ້ນເຮັດ ແບບດຽວກັບໂຢຮັນຜູ້ໃຫ້ບັບຕິສະມາໃນມັດທາຍບົດທີ 3 ຄືເອົາຂວານວາງໄວ້ຢູ່ທີ່ຮາກເຫງົ້າຂອງ

ຕົ້ນໄມ້ ແລະ ຂໍຮ້ອງຄົນທັງຫຼາຍໃຫ້ເກີດຜົນທີ່ເໝາະສົມກັບການກັບໃຈໃໝ່. ຄຳຮຽກຮ້ອງຂອງຜູ້ປະກາດເຫຼົ່ານີ້ ແຕກຕ່າງຫຼາຍຈາກຄຳເທດສະໜາໃນໂບດທົ່ວໄປທີ່ເນັ້ນຄວາມສຸກສະບາຍ; ແຕ່ບໍ່ວ່າຈະປະກາດຢູ່ບ່ອນໃດ ປະຊາຊົນກໍສະເທືອນໃຈ. ເມື່ອຄົນທັງຫຼາຍຟັງການປະກາດດ້ວຍຣິດອຳນາດຂອງພຣະວິນຍານບໍຣິສຸດ ເຖິງຄຳສອນອັນກົງໄປກົງມາ ແລະ ເຂົ້າໃຈງ່າຍຂອງພຣະຄຳພີ, ພວກເຂົາສຳນຶກໃນໃຈວ່າສິ່ງເຫຼົ່ານີ້ແມ່ນຄວາມຈິງ ແລະ ມີໜ້ອຍຄົນທີ່ສາມາດຕ້ານທານຄວາມຮູ້ສຶກນັ້ນໄດ້ທັງໝົດ. ຄົນທີ່ນັບຖືສາສະໜາແຕ່ເປືອກນອກ ກໍຕື່ນຂຶ້ນຈາກຄວາມປະໝາດຂອງຕົນ; ພວກເຂົາເຫັນເຖິງການຫຼົງຈາກຄວາມເຊື່ອ, ການເປັນມິດກັບໂລກ, ຄວາມບໍ່ເຊື່ອຖື, ຄວາມທະນົງຕົວ ແລະ ຄວາມເຫັນແກ່ຕົວຂອງຕົນ. ຫຼາຍຄົນໄດ້ສະແຫວງຫາພຣະເຈົ້າດ້ວຍການກັບໃຈ ແລະ ການຖ່ອມໃຈລົງ. ແທນທີ່ຈະເອົາໃຈໃສ່ຕໍ່ສິ່ງຂອງຝ່າຍໂລກຢ່າງທີ່ເຄີຍເຮັດມາດົນນານແລ້ວນັ້ນ ພວກເຂົາພັດໃສ່ໃຈຕໍ່ສະຫວັນເບື້ອງເທິງ. ພຣະວິນຍານຂອງພຣະເຈົ້າສະຖິດຢູ່ກັບຄົນເຫຼົ່ານີ້, ແລ້ວດ້ວຍຈິດໃຈທີ່ອ່ອນນ້ອມ ພວກເຂົາໄດ້ເຂົ້າຮ່ວມໃນການຮ້ອງຂຶ້ນວ່າ: “ຈົ່ງຢຳເກງພຣະເຈົ້າ ແລະ ຍົກຍ້ອງໃຫ້ກຽດແກ່ພຣະອົງ ເພາະເຖິງເວລາແລ້ວ ທີ່ພຣະອົງຈະຕັດສິນມະນຸດສະໂລກ.” *{GC 369.1}*

ຄົນບາບສອບຖາມດ້ວຍນ້ຳຕາວ່າ: “ຂ້ານ້ອຍຈະຕ້ອງເຮັດຢ່າງໃດຈຶ່ງຈະໄດ້ລອດພົ້ນ?” (ກິດຈະການ 16:30). ຄົນທີ່ເຄີຍສໍ້ໂກງເປັນນິໄສ ກໍຮູ້ສຶກຮ້ອນຕົວຢາກຄືນເງິນທີ່ໄດ້ໂກງມານັ້ນ. ທຸກຄົນທີ່ໄດ້ພົບສັນຕິສຸກໃນພຣະຄຣິສ ກໍຢາກແບ່ງປັນພຣະພອນນັ້ນໃຫ້ແກ່ຄົນອື່ນ. ຈິດໃຈຂອງພໍ່ແມ່ໄດ້ຫັນໄປຫາລູກ ແລະ ໃຈຂອງລູກໄດ້ຫັນໄປຫາພໍ່ແມ່. ຄວາມຫຍິ່ງທະນົງ ແລະ ການຖືຕົວອັນເປັນກຳແພງທີ່ກັ້ນຢູ່ລະຫວ່າງຄົນກໍພັງທະລາຍລົງ. ມີຄົນສາລະພາບບາບດ້ວຍຄວາມຈິງໃຈ; ສ່ວນສະມາຊິກໃນຄອບຄົວໄດ້ລົງທຶນລົງແຮງ ເພື່ອຄວາມລອດຂອງຄົນທີ່ຕົນຮັກແພງ. ຫຼາຍຄັ້ງໄດ້ຍິນສຽງຄຳອະທິຖານວິງວອນຕໍ່ພຣະເຈົ້າຢ່າງຈິງຈັງ; ທຸກແຫ່ງຫົນມີຄົນອ້ອນວອນຕໍ່ພຣະເຈົ້າດ້ວຍຄວາມທຸກໃຈ; ມີຫຼາຍຄົນອະທິຖານທັງຄືນດ້ວຍຄວາມທຸກທໍລະມານ ເພື່ອໃຫ້ໝັ້ນໃຈວ່າຄວາມບາບຂອງຕົນໄດ້ຮັບການອະໄພ, ຫຼືເພື່ອໃຫ້ພີ່ນ້ອງ ຫຼື ເພື່ອນບ້ານກັບໃຈ. *{GC 369.2}*

ມີຄົນຈາກທຸກຊົນຊັ້ນໃນສັງຄົມ ພາກັນຫຼັ່ງໄຫຼເຂົ້າປະຊຸມປະກາດການສະເດັດມາຂອງພຣະຄຣິສ, ບໍ່ວ່າຈະເປັນຄົນຮັ່ງມີ ຫຼື ຍາກຈົນ, ສູງສົ່ງ ຫຼື ຕ່ຳຕ້ອຍ, ທຸກຄົນລ້ວນແຕ່ມີເຫດຜົນສ່ວນຕົວ ທີ່ຢາກຟັງຄຳສອນເລື່ອງການສະເດັດມານັ້ນ ດ້ວຍຫູຂອງຕົນເອງ. ພຣະຜູ້ເປັນເຈົ້າຊົງຢັບຢັ້ງການຕໍ່ຕ້ານ ໃນຂະນະທີ່ຜູ້ຮັບໃຊ້ຂອງພຣະອົງອະທິບາຍເຫດຜົນວ່າ ເປັນຫຍັງພວກເຂົາຈຶ່ງເຊື່ອ. ບາງຄັ້ງຜູ້ໃຫ້ຄຳພະຍານນັ້ນອ່ອນແອ, ແຕ່ພຣະວິນຍານຂອງພຣະເຈົ້າຊົງກະທຳໃຫ້ຄວາມຈິງຂອງພຣະອົງມີຣິດອຳນາດ. ຄົນທີ່ເຂົ້າປະຊຸມຮູ້ສຶກວ່າ ມີທູດສະຫວັນບໍຣິສຸດຢູ່ໃນທີ່ປະຊຸມ; ມີຜູ້ຄົນເຂົ້າຮັບເຊື່ອໃໝ່ທຸກມື້ທຸກວັນ. ຄົນຈຳນວນຫຼວງຫຼາຍຟັງດ້ວຍໃຈຈົດໃຈຈໍ່ ຂະນະທີ່ຜູ້ປະກາດກ່າວເຖິງຫຼັກຖານຕ່າງ ໆ ທີ່ຊີ້ໃຫ້ເຫັນວ່າ ການສະເດັດມາຂອງພຣະຄຣິສນັ້ນໃກ້ເຂົ້າມາແລ້ວ; ເໝືອນກັບວ່າສະຫວັນ ແລະ ແຜ່ນດິນໂລກໄດ້ຫຍັບເຂົ້າຫາກັນ. ທັງຄົນຊະລາ, ໄວກາງຄົນ ແລະ ຊາວໜຸ່ມລ້ວນແຕ່ໄດ້ສຳຜັດເຖິງຣິດອຳນາດຂອງພຣະເຈົ້າ. ຄົນທັງຫຼາຍພາກັນກັບເມືອບ້ານພ້ອມດ້ວຍຄຳສັນລະເສີນພຣະເຈົ້າ; ມີສຽງຂັບຮ້ອງສັນລະເສີນດັງກ້ອງໄປໃນຍາມຄ່ຳຄືນ. ບໍ່ມີໃຜທີ່ເຂົ້າຮ່ວມໃນການປະຊຸມເຫຼົ່ານັ້ນ ຈະລືມພາບອັນຈັບໃຈໄດ້ລົງ. *{GC 369.3}*

ຄວາມຈິງຖືກຕໍ່ຕ້ານ

ການປະກາດເວລາທີ່ແນ່ນອນຂອງການສະເດັດມາຂອງພຣະຄຣິສ ໄດ້ຖືກຕໍ່ຕ້ານຢ່າງຮຸນແຮງຈາກຄົນທຸກຊົນຊັ້ນ ຕັ້ງແຕ່ສາສະໜາຈານຈົນເຖິງຄົນສຳມະເລເທເມົາທີ່ທ້າທາຍສະຫວັນຢ່າງໜ້າດ້ານທີ່ສຸດ. ທັງນີ້ກໍເປັນການສຳເລັດຂອງຄຳພະຍາກອນທີ່ກ່າວວ່າ: “ຍຸກສຸດທ້າຍຈະມີຄົນເຍາะเย้ยมาเว้า

ສຸດສີ ຕາມໃຈປາຖະໜາຂອງຕົນ. ພວກເຂົາຈະຖາມວ່າ, 'ຄຳທີ່ຊົງສັນຍາໄວ້ວ່າ ພຣະອົງຈະສະເດັດ ມານັ້ນຢູ່ໃສ? ເພາະວ່າຕັ້ງແຕ່ບັນພະບຸລຸດລ່ວງລັບໄປແລ້ວ ສິ່ງທັງປວງກໍເປັນຢູ່ເໝືອນເດີມ ຕັ້ງແຕ່ ເລີ່ມຕົ້ນຊົງສ້າງໂລກ.'" (2 ເປໂຕ 3:3–4). ຫຼາຍຄົນທີ່ອ້າງວ່າຮັກພຣະຜູ້ຊ່ວຍໃຫ້ລອດໄດ້ປະກາດ ວ່າ ຕົນບໍ່ໄດ້ຕໍ່ຕ້ານຄຳສອນເລື່ອງການສະເດັດມາຄັ້ງທີສອງ, ແຕ່ກໍຂໍຄັດຄ້ານພຽງແຕ່ເລື່ອງການກຳນົດ ເວລາທີ່ແນ່ນອນເທົ່ານັ້ນ. ແຕ່ພຣະເຈົ້າຜູ້ຊົງເຫັນທຸກສິ່ງທຸກຢ່າງ ຊົງອ່ານຈິດໃຈຂອງພວກເຂົາທີ່ບໍ່ ຢາກໄດ້ຍິນວ່າ ພຣະຄຣິສຈະສະເດັດມາພິພາກສາດ້ວຍຄວາມຊອບທຳ. ຄົນເຫຼົ່ານີ້ເປັນຜູ້ຮັບໃຊ້ທີ່ບໍ່ ສັດຊື່, ວຽກງານທີ່ເຮັດໄປນັ້ນ ຈະບໍ່ຜ່ານການກວດກາຈາກພຣະເຈົ້າຜູ້ພິສູດຈິດໃຈຂອງມະນຸດ; ພວກເຂົາ ຈຶ່ງຢ້ານທີ່ຈະພົບກັບອົງພຣະຜູ້ເປັນເຈົ້າຂອງຕົນ. ເໝືອນກັບຊາວຢິວໃນສະໄໝທີ່ພຣະຄຣິສສະເດັດມາ ຄັ້ງທີໜຶ່ງ, ພວກເຂົາບໍ່ພ້ອມທີ່ຈະຕ້ອນຮັບພຣະອົງ. ພວກເຂົາບໍ່ພຽງແຕ່ບໍ່ຍອມຟັງເຫດຜົນອັນກົງໄປ ກົງມາຈາກພຣະຄຳພີ, ແຕ່ກໍຍັງເຍາะເຍີ້ຍຜູ້ທີ່ລໍຄອຍພຣະເຢຊູ. ຊາຕານ ແລະ ທູດຂອງມັນພາກັນ ດີໃຈ ແລະ ເຍີ້ຍຫຍັນພຣະຄຣິສກັບເຫຼົ່າທູດສະຫວັນບໍຣິສຸດວ່າ ຄົນທີ່ມີຊື່ວ່າເປັນຄຣິສຕຽນ ບໍ່ມີຄວາມ ຮັກຕໍ່ພຣະອົງ ແລະ ບໍ່ຢາກໃຫ້ພຣະອົງສະເດັດກັບມາ. {GC 370.1}

ຄົນທີ່ປະຕິເສດຄຳສອນເລື່ອງການສະເດັດມາຂອງພຣະຄຣິສສ່ວນໃຫຍ່ໃຫ້ເຫດຜົນວ່າ, "ບໍ່ມີໃຜ ຮູ້ຈັກວັນເວລານັ້ນ." ພຣະຄຳພີຂຽນວ່າ: "ວັນກຳນົດກັບໂມງກຳນົດນັ້ນ ບໍ່ມີຜູ້ໃດຮູ້ຈັກ ແມ່ນພວກ ທູດສະຫວັນກໍບໍ່ຮູ້ຈັກ ຮູ້ຈັກແຕ່ພຣະບິດາຂອງເຮົາອົງດຽວ." (ມັດທາຍ 24:36 ສະບັບລາວບູຮານ). ຄົນ ທັງຫຼາຍທີ່ລໍຄອຍການສະເດັດມາຂອງພຣະຄຣິສ ໄດ້ອະທິບາຍຂໍ້ພຣະຄຳພີນີ້ຢ່າງຊັດເຈນ ໂດຍບໍ່ມີ ຄວາມຂັດແຍ້ງແຕ່ຢ່າງໃດກັບຄວາມເຊື່ອ, ທັງສາມາດຊີ້ໃຫ້ເຫັນຢ່າງຈະແຈ້ງວ່າ ພວກຄົນທີ່ຕໍ່ຕ້ານນັ້ນ ໄດ້ນຳໃຊ້ຂໍ້ພຣະຄຳພີດັ່ງກ່າວໃນທາງທີ່ຜິດ. ພຣະຄຣິສຊົງກ່າວຖ້ອຍຄຳດັ່ງກ່າວໃນບົດສົນທະນາອັນ ໜ້າຈົດຈຳກັບພວກສາວົກ ຂະນະທີ່ປະທັບຢູ່ເທິງພູເຂົາໝາກກອກເທດ ຫຼັງຈາກພຣະອົງສະເດັດອອກ ຈາກພຣະວິຫານເປັນຄັ້ງສຸດທ້າຍ. ໃນຄາວນັ້ນ, ພວກສາວົກໄດ້ຖາມວ່າ: "ຈົ່ງບອກພວກຂ້ານ້ອຍແດ່ ວ່າ . . . ມີສິ່ງໃດເປັນໝາຍສຳຄັນເພື່ອຊີ້ໃຫ້ເຫັນວ່າ ແມ່ນເວລາມາປາກົດຂອງທ່ານ ແລະ ເວລາສິ້ນສຸດ ຂອງໂລກ?" ພຣະເຢຊູຊົງກ່າວເຖິງໝາຍສຳຄັນຕ່າງ ໆ ທີ່ຈະເກີດຂຶ້ນແລ້ວຊົງຕອບວ່າ: "ເມື່ອພວກເຈົ້າ ເຫັນເຫດການນັ້ນເກີດຂຶ້ນ ພວກເຈົ້າກໍຈະຮູ້ໄດ້ວ່າ ເວລາມາໃກ້ແລ້ວພ້ອມທີ່ຈະເກີດຂຶ້ນ." (ມັດທາຍ 24:3, 33). ເຮົາບໍ່ຄວນໃຊ້ຖ້ອຍຄຳຂອງພຣະເຢຊູໃນຂໍ້ໜຶ່ງ ເພື່ອລົບລ້າງອີກຂໍ້ໜຶ່ງ. ເຖິງແມ່ນວ່າບໍ່ ມີຜູ້ໃດຮູ້ຈັກ *ວັນ* ຫຼື *ໂມງ* ຂອງການສະເດັດມາຂອງພຣະອົງ ແຕ່ພຣະອົງຊົງສັ່ງໄວ້ໃຫ້ເຮົາຮູ້ຈັກ ເມື່ອເວລານັ້ນໃກ້ເຂົ້າມາ. ນອກຈາກນັ້ນພຣະອົງຍັງສອນວ່າ ຖ້າຜູ້ໃດບໍ່ເອົາໃຈໃສ່ຕໍ່ຄຳເຕືອນຂອງ ພຣະອົງ, ຖ້າລະເລີຍ ຫຼື ບໍ່ຍອມທີ່ຈະຮັບຮູ້ວ່າການສະເດັດມານັ້ນໃກ້ແລ້ວ, ກໍຈະອັນຕະລາຍເຖິງ ຊີວິດ ເໝືອນກັບຄົນໃນສະໄໝໂນອາທີ່ບໍ່ຍອມຮັບຮູ້ເວລາຂອງນ້ຳຖ້ວມໂລກ. ຍັງມີຄຳອຸປະມາໃນມັດທາຍ ບົດທີ 24 ເຊິ່ງປຽບທຽບຜູ້ຮັບໃຊ້ທີ່ຊື່ສັດກັບຜູ້ຮັບໃຊ້ທີ່ບໍ່ສັດຊື່ ໂດຍປະກາດເຖິງຄວາມພິນາດຂອງ ຄົນທີ່ເວົ້າຢູ່ໃນໃຈວ່າ, "ກວ່ານາຍຂອງເຮົາຈະມາກໍອີກນານ." (ມັດທາຍ 24:48 NTV). ເລື່ອງ ນີ້ສະແດງໃຫ້ເຫັນວ່າ ເມື່ອພຣະຄຣິສສະເດັດມາ ພຣະອົງຈະມີທ່າທີຢ່າງໃດຕໍ່ຄົນທີ່ພຣະອົງພົບ ວ່າ ກຳລັງລໍຄອຍພຣະອົງ ແລະ ສອນຄົນອື່ນເຖິງການສະເດັດມາ ແລະ ຈະຕອບສະໜອງຢ່າງໃດ ຕໍ່ ຜູ້ທີ່ປະຕິເສດເລື່ອງການສະເດັດມາຂອງພຣະອົງ. ພຣະອົງຊົງກ່າວວ່າ: "ດັ່ງນັ້ນຈົ່ງໃຫ້ເຝົ້າລະວັງ ຢູ່, . . . ຄົນຮັບໃຊ້ຜູ້ນີ້ຈະເປັນສຸກໃຈ ເມື່ອຜູ້ເປັນນາຍກັບມາເຮືອນຂອງຕົນ ພົບລາວກຳລັງເຮັດໜ້າທີ່ ຂອງຕົນຢູ່." (ມັດທາຍ 24:42, 46). "ເຫດສະນັ້ນ, ຖ້າທ່ານບໍ່ເຝົ້າລະວັງ ເຮົາຈະມາເໝືອນຢ່າງ ຂະໂມຍມາ ແລະ ທ່ານຈະບໍ່ຮູ້ເວລາໂມງໃດທີ່ເຮົາຈະມາເຖິງທ່ານ." (ພຣະນິມິດ 3:3 ສະບັບລາວ ບູຮານ). {GC 370.2}

ອາຈານໂປໂລກ່າວເຖິງຄົນກຸ່ມໜຶ່ງ ທີ່ບໍ່ຮູ້ເວລາຂອງການສະເດັດມາຂອງພຣະອົງວ່າ: “ວັນຂອງອົງພຣະຜູ້ເປັນເຈົ້າຈະສະເດັດມາ ເໝືອນຂະໂມຍມາໃນເວລາກາງຄືນ. ເມື່ອໃດພວກເຂົາເວົ້າວ່າ: ‘ສະຫງົບສຸກ ແລະ ປອດໄພດີແລ້ວ’ ເມື່ອນັ້ນແຫຼະ ຄວາມພິນາດຈິບຫາຍຈະມາເຖິງພວກເຂົາໃນທັນທີ . . . ແລະ ພວກເຂົາຈະໜີບໍ່ພົ້ນເປັນແນ່.” ແຕ່ເພິ່ນຍັງກ່າວຕື່ມໃຫ້ແກ່ຜູ້ທີ່ຟັງຄຳເຕືອນຂອງອົງພຣະຜູ້ຊ່ວຍໃຫ້ລອດວ່າ: “ພີ່ນ້ອງທັງຫຼາຍເອີຍ ພວກເຈົ້າບໍ່ໄດ້ຢູ່ໃນຄວາມມືດແລ້ວ ແລະ ວັນນັ້ນຄົງຈະບໍ່ມາຫຼອນໃສ່ພວກເຈົ້າດັ່ງຂະໂມຍມາ. ເພາະວ່າ, ພວກເຈົ້າທຸກຄົນເປັນລູກຂອງຄວາມສະຫວ່າງ ເປັນລູກຂອງກາງເວັນ; ພວກເຮົາບໍ່ເປັນຝ່າຍກາງຄືນ ຫຼື ຝ່າຍຄວາມມືດ.” (1 ເທສະໂລນີກ 5:2–5). *{GC 371.1}*

ດັ່ງນັ້ນ, ຈຶ່ງເຫັນໄດ້ວ່າ ພຣະຄຳພີບໍ່ໄດ້ສະໜັບສະໜຸນໃຫ້ຄົນເມີນເສີຍຕໍ່ຄວາມຮູ້ເລື່ອງເວລາທີ່ການສະເດັດມາຂອງພຣະຄຣິສໃກ້ເຂົ້າມາ. ແຕ່ຄົນທັງຫຼາຍທີ່ຊອກຫາຂໍ້ແກ້ຕົວ ເພື່ອທີ່ຈະປະຕິເສດຄວາມຈິງ ກໍໄດ້ປິດຫູບໍ່ຟັງຄຳອະທິບາຍນີ້. ຄົນທີ່ທ້າທາຍຢ່າງເປີດເຜີຍ ແລະ ແມ່ນແຕ່ຄົນທີ່ອ້າງຕົນເປັນຜູ້ຮັບໃຊ້ຂອງພຣະຄຣິສ ກໍຍັງຕອບໂຕ້ວ່າ “ບໍ່ມີຜູ້ໃດຮູ້ຈັກວັນນັ້ນ ຫຼື ໂມງນັ້ນ.” ເມື່ອປະຊາຊົນເກີດຄວາມສົນໃຈ ແລະ ເລີ່ມຖາມຫາທາງແຫ່ງຄວາມລອດພົ້ນ ກໍມີຜູ້ສອນສາສະໜາເຂົ້າມາແຊກຢູ່ລະຫວ່າງພວກເຂົາກັບຄວາມຈິງ ແລະ ປິດເບືອນພຣະຄຳຂອງພຣະເຈົ້າ ເພື່ອລະງັບຄວາມຢ້ານກົວຂອງພວກເຂົາ. ພວກຍາມທີ່ບໍ່ສັດຊື່ ໄດ້ຮ່ວມມືກັບມານຊາຕານໃນການຮ້ອງຂຶ້ນວ່າ, “ສະຫງົບສຸກ, ສະຫງົບສຸກ” ໃນເວລາທີ່ພຣະເຈົ້າບໍ່ໄດ້ປະກາດເຖິງຄວາມສະຫງົບສຸກ. ເໝືອນກັບພວກຟາຣີຊາຍໃນສະໄໝຂອງພຣະເຢຊູ, ມີຫຼາຍຄົນບໍ່ຍອມເຂົ້າອານາຈັກສະຫວັນດ້ວຍຕົນເອງ ແລະ ຍັງຂັດຂວາງຄົນອື່ນບໍ່ໃຫ້ເຂົ້າໄປ. ພວກເຂົາຈະຕ້ອງຮັບຜິດຊອບຕໍ່ຄວາມພິນາດຂອງຄົນເຫຼົ່ານັ້ນ. *{GC 372.1}*

ສ່ວນຫຼາຍ ກຸ່ມທຳອິດທີ່ຮັບເອົາຄຳສອນດັ່ງກ່າວ ແມ່ນຄົນທີ່ນອບນ້ອມຖ່ອມຕົນ ແລະ ອຸທິດຕົນຫຼາຍທີ່ສຸດໃນຄຣິສຕະຈັກ. ຄົນທີ່ສຶກສາພຣະຄຳພີດ້ວຍຕົນເອງກໍຮູ້ຢູ່ວ່າ ຄວາມຄິດເຫັນຂອງຄົນທົ່ວໄປໃນເລື່ອງຄຳພະຍາກອນບໍ່ສອດຄ່ອງກັບພຣະຄຳພີ. ບ່ອນໃດປະຊາຊົນບໍ່ໄດ້ຖືກພວກສາສະໜາຈານຄວບຄຸມ ພວກເຂົາສາມາດຄົ້ນຄວ້າພຣະຄຳຂອງພຣະເຈົ້າດ້ວຍຕົນເອງ. ເມື່ອເອົາຄຳສອນເລື່ອງການສະເດັດມາຂອງພຣະຄຣິສມາປຽບທຽບກັບພຣະຄຳພີແລ້ວ ພວກເຂົາເຫັນວ່າເປັນຄຳສອນທີ່ມາຈາກພຣະເຈົ້າ. *{GC 372.2}*

ຫຼາຍຄົນຖືກພີ່ນ້ອງທີ່ບໍ່ເຊື່ອກົດຂີ່ຂົ່ມເຫັງ; ບາງຄົນກໍຍອມມິດງຽບກ່ຽວກັບຄວາມຫວັງຂອງຕົນ ເພື່ອຮັກສາຕຳແໜ່ງໃນຄຣິສຕະຈັກ; ສ່ວນຄົນອື່ນຮູ້ສຶກວ່າ ພຣະເຈົ້າຊົງມອບໝາຍຄວາມຈິງໃຫ້ພວກເຂົາ ແລະ ຈະປິດບັງບໍ່ໄດ້ ຖ້າຈະຈົງຮັກພັກດີຕໍ່ພຣະອົງ. ມີຫຼາຍຄົນຖືກຕັດອອກຈາກຄຣິສຕະຈັກ ໂດຍມີເຫດຜົນພຽງແຕ່ວ່າ ເຂົາໄດ້ເວົ້າເຖິງຄວາມເຊື່ອຂອງຕົນໃນການສະເດັດມາຂອງພຣະຄຣິສ. ຖ້ອຍຄຳຂອງຜູ້ເຜີຍພຣະທຳມີຄວາມໝາຍຫຼາຍທີ່ສຸດສຳລັບຄົນທີ່ຖືກທົດສອບຄວາມເຊື່ອເຫຼົ່ານີ້, ເຊິ່ງກ່າວວ່າ: “ພີ່ນ້ອງຂອງເຈົ້າຜູ້ທີ່ກຽດຊັງເຈົ້າ ແລະ ຫວ່ຽງເຈົ້າອອກໄປເພາະເຫັນແກ່ນາມຊື່ຂອງເຮົາ ໂດຍເວົ້າວ່າ ‘ຂໍພຣະເຢໂຮວາຊົງຮັບກຽດ,’ ແຕ່ພຣະອົງຈະໄດ້ປາກົດ ແລະ ເປັນຄວາມຊື່ນບານຂອງເຈົ້າ ແລະ ເຂົາເຫຼົ່ານັ້ນຈະຕ້ອງໄດ້ຮັບຄວາມອັບອາຍ.” (ເອຊາຢາ 66:5 ດັດແປງຈາກສະບັບ TKJV). *{GC 372.3}*

ເຫຼົ່າທູດສະຫວັນຂອງພຣະເຈົ້າໄດ້ເຝົ້າຕິດຕາມຜົນຂອງຄຳເຕືອນນີ້ ດ້ວຍຄວາມສົນໃຈອັນເລິກເຊິ່ງ. ເມື່ອຄຣິສຕະຈັກສ່ວນໃຫຍ່ປະຕິເສດການປະກາດນັ້ນ ພວກທູດສະຫວັນກໍຫັນໜ້າໄປທາງອື່ນດ້ວຍຄວາມໂສກເສົ້າ. ແຕ່ກໍມີຫຼາຍຄົນທີ່ຍັງບໍ່ໄດ້ຖືກທົດສອບກ່ຽວກັບຄວາມຈິງເລື່ອງການສະເດັດມາຂອງພຣະຄຣິສ. ຫຼາຍຄົນຖືກຜົວ, ເມຍ, ພໍ່ແມ່ ຫຼື ລູກນຳພາໃຫ້ຫຼົງຜິດ ຈົນເຊື່ອວ່າການຟັງຄຳສອນ “ນອກຮີດ” ແບບທີ່ຊາວແອັດເວັນຕິສສອນນັ້ນກໍເປັນບາບ. ພຣະເຈົ້າຊົງໃຊ້ທູດສະຫວັນໄປເຝົ້າຮັກສາ

ຄົນເຫຼົ່ານີ້ດ້ວຍຄວາມສັດຊື່ ເພາະວ່າຈະມີແສງສະຫວ່າງສ່ອງມາຍັງພວກເຂົາອີກຈາກບັນລັງຂອງພຣະເຈົ້າ. {GC 372.4}

ຄົນທີ່ຮັບເອົາຄຳສອນນັ້ນ ກໍເຝົ້າລໍຄອຍການສະເດັດມາຂອງພຣະຜູ້ຊ່ວຍໃຫ້ລອດດ້ວຍຄວາມປາຖະໜາທີ່ບໍ່ອາດບັນລະຍາຍໄດ້. ເວລາທີ່ພວກເຂົາຄາດຫວັງວ່າຈະໄດ້ພົບພຣະອົງກໍໃກ້ເຂົ້າມາແລ້ວ; ພວກເຂົາລໍຖ້າເວລານັ້ນດ້ວຍຄວາມສະຫງົບໃຈ ແລະ ພັກພິງໃນພຣະເຈົ້າຢ່າງໃກ້ຊິດດ້ວຍການອະທິຖານ; ສິ່ງເຫຼົ່ານີ້ເປັນສະເໝືອນຄ່າມັດຈຳຂອງສັນຕິສຸກທີ່ຈະໄດ້ຮັບໃນສະຫວັນ. ທຸກຄົນທີ່ມີປະສົບການຂອງຄວາມຫວັງ ແລະ ຄວາມໄວ້ວາງໃຈຂອງການລໍຖ້າການສະເດັດມາໃນຄັ້ງນັ້ນ ຈະບໍ່ມີວັນລືມເລືອນໄປໄດ້. ຫຼາຍອາທິດກ່ອນເວລານັ້ນ, ທຸລະກິດຝ່າຍໂລກສ່ວນຫຼາຍກໍຖືກວາງໄວ້, ຜູ້ທີ່ເຊື່ອຢ່າງຈິງໃຈໄດ້ກວດສອບທຸກຄວາມຄິດ ແລະ ຄວາມຮູ້ສຶກຂອງຕົນຢ່າງລະມັດລະວັງ ເໝືອນກັບຄົນທີ່ໃກ້ຈະຫຼັບຕາລາໂລກໃນອີກສອງສາມຊົ່ວໂມງຂ້າງໜ້າ. ບໍ່ມີການເຮັດ “ເສື້ອຄຸມຍາວສຳລັບການຂຶ້ນສະຫວັນ;” ແຕ່ທຸກຄົນຮູ້ສຶກວ່າ ຕ້ອງການຫຼັກຖານພາຍໃນໃຈທີ່ບົ່ງບອກວ່າ ຕົນມີຄວາມພ້ອມທີ່ຈະພົບພຣະຜູ້ຊ່ວຍໃຫ້ລອດ. ເສື້ອຄຸມຍາວຂອງພວກເຂົາຄືຈິດໃຈທີ່ບໍຣິສຸດ, ຄືອຸປະນິໄສທີ່ໄດ້ຮັບການຊຳລະຈາກຄວາມບາບ ດ້ວຍພຣະໂລຫິດຂອງພຣະຄຣິສ. ຢາກໃຫ້ຄົນຂອງພຣະເຈົ້າໃນທຸກມື້ນີ້ ມີການສຳຫຼວດຈິດໃຈ, ຄວາມກະຕືລືລົ້ນ ແລະ ຄວາມເຊື່ອໝັ້ນເໝືອນກັບຄົນໃນສະໄໝນັ້ນ. ຖ້າພວກເຂົາໄດ້ຖ່ອມໃຈລົງຕໍ່ພຣະເຈົ້າ ແລະ ທູນອະທິຖານຕໍ່ພຣະທີ່ນັ່ງແຫ່ງພຣະກະລຸນາຢ່າງຕໍ່ເນື່ອງ, ພວກເຂົາຄົງມີປະສົບການທີ່ເລິກເຊິ່ງກວ່າທີ່ເປັນຢູ່ໃນເວລານີ້. ເນື່ອງຈາກຫຼາຍຄົນມີການອະທິຖານໜ້ອຍເກີນໄປ, ມີການສຳນຶກໃນຄວາມບາບໜ້ອຍເກີນໄປ ແລະ ຂາດຄວາມເຊື່ອທີ່ມີຊີວິດ, ພວກເຂົາຈຶ່ງບໍ່ໄດ້ຮັບພຣະຄຸນທີ່ພຣະຜູ້ໄຖ່ປະທານໃຫ້ຢ່າງອຸດົມສົມບູນ. {GC 373.1}

ເຝົ້າລໍດ້ວຍຄວາມຫວັງ

ພຣະເຈົ້າມີພຣະປະສົງທີ່ຈະທົດສອບຄົນຂອງພຣະອົງ; ພຣະອົງຈຶ່ງປິດບັງຂໍ້ຜິດພາດ ໃນການຄຳນວນເວລາກຳນົດຂອງຄຳພະຍາກອນ. ຄົນທີ່ລໍຄອຍການສະເດັດມາຂອງພຣະຄຣິສ ກໍບໍ່ເຫັນຂໍ້ຜິດພາດດັ່ງກ່າວ; ສ່ວນພວກທີ່ຕໍ່ຕ້ານ ແລະ ມີການສຶກສາສູງທີ່ສຸດ ກໍບໍ່ເຫັນຄວາມຜິດນັ້ນເຊັ່ນກັນ ແຕ່ພັດກ່າວວ່າ: “ພວກເຈົ້າຄຳນວນເວລາຂອງຄຳພະຍາກອນຖືກຕ້ອງແລ້ວ, ມີເຫດການຍິ່ງໃຫຍ່ບາງຢ່າງໃກ້ຈະເກີດຂຶ້ນ ແຕ່ມັນບໍ່ເປັນຢ່າງທີ່ມິນເລີຄິດດອກ, ເພາະເມື່ອຄົບເວລາດັ່ງກ່າວ ຄົນທົ່ວໂລກຈະກັບໃຈເຊື່ອພຣະເຈົ້າ ບໍ່ແມ່ນການສະເດັດມາຄັ້ງທີສອງຂອງພຣະຄຣິສ.” {GC 373.2}

ເວລາທີ່ຄາດການໄວ້ກໍຜ່ານໄປ ແລະ ພຣະຄຣິສບໍ່ໄດ້ປາກົດເພື່ອປົດປ່ອຍຄົນຂອງພຣະອົງ. ຄົນທີ່ລໍຄອຍພຣະຜູ້ຊ່ວຍໃຫ້ລອດດ້ວຍຄວາມຮັກ ແລະ ຄວາມເຊື່ອຢ່າງຈິງໃຈ ກໍປະສົບກັບຄວາມຜິດຫວັງຢ່າງຂົມຂື່ນ. ຢ່າງໃດກໍຕາມ, ພຣະປະສົງຂອງພຣະເຈົ້າໄດ້ສຳເລັດ; ພຣະອົງທົດສອບຈິດໃຈຂອງຄົນທີ່ລໍຖ້າການສະເດັດມາຂອງພຣະອົງ. ຫຼາຍຄົນລໍຖ້າເພາະວ່າມີຄວາມຢ້ານກົວໂດຍບໍ່ມີເຫດຜົນອື່ນ; ການຮັບເຊື່ອຂອງຄົນເຫຼົ່ານີ້ບໍ່ໄດ້ສົ່ງຜົນຕໍ່ຊີວິດຈິດໃຈຂອງພວກເຂົາ; ເມື່ອພຣະເຢຊູບໍ່ໄດ້ສະເດັດມາຕາມເວລາທີ່ຄິດໄວ້ນັ້ນ, ຄົນເຫຼົ່ານີ້ປະກາດວ່າ ຕົນບໍ່ໄດ້ຮູ້ສຶກຜິດຫວັງ ເພາະບໍ່ເຄີຍເຊື່ອວ່າພຣະອົງຈະມາຈິງ. ພວກເຂົາເປັນກຸ່ມທຳອິດທີ່ເຍາะເຍີ້ຍຄວາມໂສກເສົ້າຂອງຜູ້ເຊື່ອທີ່ແທ້ຈິງ. {GC 374.1}

ຢ່າງໃດກໍຕາມ, ພຣະເຢຊູ ແລະ ບັນດາທູດສະຫວັນທັ້ງປວງມີຄວາມຮັກ ແລະ ເອັນດູຕໍ່ຄົນທັ້ງຫຼາຍທີ່ຜິດຫວັງ ທີ່ຜ່ານການທົດສອບຢ່າງສັດຊື່. ຖ້າພຣະເຈົ້າຊົງເປີດຜ້າກັ້ງໃຫ້ມະນຸດເຫັນໃນສິ່ງທີ່ບໍ່ສາມາດເຫັນໄດ້ດ້ວຍຕາເປົ່າ ກໍຈະປາກົດໃຫ້ເຫັນວ່າ ມີທູດສະຫວັນຢູ່ໃກ້ກັບຄົນທີ່ສັດຊື່ເຫຼົ່ານີ້ ແລະ ປົກປ້ອງພວກເຂົາຈາກລູກທະນູຂອງຊາຕານ. {GC 374.2}

ທູດສະຫວັນອົງທີສອງໄດ້ຕາມຫຼັງອົງທີໜຶ່ງມາ ແລະ ປະກາດວ່າ: “ບາບີໂລນມະຫານະຄອນນັ້ນຫຼົ້ມຈົມແລ້ວ ຫຼົ້ມຈົມເສຍແລ້ວ ຄືນະຄອນທີ່ເຮັດໃຫ້ປະຊາຊາດທັງປວງດື່ມເຫຼົ້າແວງປຸກຢ່າງເຫຼືອເກີນຂອງຕົນຕາມຄວາມປາຖະໜາທາງກາມ.” (ພຣະນິມິດ 14:8).

ເບິ່ງໜ້າ 305.

Image generated with AI (Google Gemini).

21

ປະຕິເສດຄຳເຕືອນ

ຄຣິສຕະຈັກເສື່ອມຖອຍເມື່ອເຮັດຕາມຊາວໂລກ

ໃນການເທດສະໜາປະກາດຄຳສອນ ເລື່ອງການສະເດັດກັບມາຂອງພຣະຄຣິສ, ວິນລຽມ ມິນເລີ ແລະ ເພື່ອນຮ່ວມງານກັບເພິ່ນ ໄດ້ເຮັດວຽກດ້ວຍຈຸດປະສົງພຽງຢ່າງດຽວຄື ການປຸກຄົນທັງຫຼາຍໃຫ້ຕື່ນຂຶ້ນ ເພື່ອກຽມພ້ອມສຳລັບການພິພາກສາ. ພວກເຂົາພະຍາຍາມປຸກຄົນທີ່ນັບຖືສາສະໜາ ໃຫ້ຕື່ນຂຶ້ນສູ່ຄວາມຫວັງອັນແທ້ຈິງຂອງຄຣິສຕະຈັກ ແລະ ຄວາມຈຳເປັນທີ່ພວກເຂົາຕ້ອງມີປະສົບການໃນຊີວິດຄຣິສຕຽນທີ່ເລິກເຊິ່ງກວ່າເກົ່າ; ນອກຈາກນັ້ນ, ກຸ່ມຂອງມິນເລີຍັງປະກາດ ເພື່ອເຕືອນຄົນທີ່ຍັງບໍ່ໄດ້ກັບໃຈ ໃຫ້ຮູ້ເຖິງໜ້າທີ່ຂອງພວກເຂົາວ່າ ຈະຕ້ອງກັບໃຈຮັບເອົາພຣະເຈົ້າໃນທັນທີໂດຍບໍ່ຊັກຊ້າ. “ພວກເຂົາບໍ່ໄດ້ພະຍາຍາມທີ່ຈະໂນ້ມນ້າວຄົນໃຫ້ເຂົ້າມາເປັນສະມາຊິກຂອງຄະນະນິກາຍຂອງສາສະໜາ. ແຕ່ໄດ້ປະກາດກັບທຸກຄະນະນິກາຍ ແລະ ທຸກພັກທຸກພວກ ໂດຍບໍ່ໄດ້ເຂົ້າໄປແຊກແຊງໃນລະບົບການຈັດຕັ້ງ ຫຼື ລະບຽບວິໄນຂອງກຸ່ມເຫຼົ່ານັ້ນ.” *{GC 375.1}*

ມິນເລີກ່າວວ່າ: “ໃນການປະກາດທັງໝົດຂອງຂ້າພະເຈົ້າ, ຂ້າພະເຈົ້າບໍ່ເຄີຍມີຄວາມປາຖະໜາ ຫຼື ມີຄວາມຄິດທີ່ຈະສ້າງກຸ່ມຂຶ້ນເອງ ທີ່ແຕກຕ່າງຈາກຄະນະນິກາຍທີ່ມີຢູ່ແລ້ວ ຫຼື ຊ່ວຍໃຫ້ຄະນະໜຶ່ງໄດ້ຮັບຜົນປະໂຫຍດຫຼາຍກວ່າຄະນະອື່ນ. ຂ້າພະເຈົ້າຄິດທີ່ຈະຊ່ວຍທຸກຝ່າຍທັງໝົດ, ໂດຍຄິດວ່າຊາວຄຣິສຕຽນທຸກຄົນຈະມີຄວາມຊື່ນຊົມຍິນດີ ເມື່ອໄດ້ຍິນເຖິງເລື່ອງການສະເດັດກັບມາຂອງພຣະຄຣິສ; ແລະເຊື່ອວ່າຄົນທີ່ເຫັນຕ່າງກໍຈະບໍ່ກຽດຊັງຜູ້ທີ່ຮັບເອົາຄຳສອນດັ່ງກ່າວ. ຂ້າພະເຈົ້າບໍ່ໄດ້ຄາດຄິດວ່າ ຈະຕ້ອງມີການແຍກປະຊຸມຕ່າງຫາກ. ຈຸດປະສົງທັງໝົດຂອງຂ້າພະເຈົ້າ ແມ່ນຄວາມປາຖະໜາທີ່ຈະຊ່ວຍຄົນໃຫ້ກັບໃຈມາຫາພຣະເຈົ້າ ແລະ ເຕືອນຊາວໂລກເຖິງການພິພາກສາທີ່ກຳລັງຈະເກີດຂຶ້ນ ພ້ອມດ້ວຍການຊັກຊວນເພື່ອນມະນຸດ ໃຫ້ກຽມຈິດກຽມໃຈເພື່ອພົບກັບອົງພຣະຜູ້ເປັນເຈົ້າດ້ວຍສັນຕິສຸກ. ຄົນສ່ວນໃຫຍ່ທີ່ກັບໃຈຍ້ອນການປະກາດຂອງຂ້າພະເຈົ້າ ກໍໄດ້ເຂົ້າຮ່ວມກັບຄຣິສຕະຈັກທີ່ມີຢູ່ແລ້ວ.”[1] *{GC 375.2}*

ເນື່ອງຈາກການປະກາດຂອງມິນເລີສົ່ງຜົນໃຫ້ຄຣິສຕະຈັກທັງຫຼາຍເຂັ້ມແຂງຂຶ້ນ ຄົນສ່ວນໃຫຍ່ຈຶ່ງເຫັນວ່າເປັນສິ່ງທີ່ດີ. ແຕ່ເມື່ອພວກສາສະໜາຈານ ແລະ ຜູ້ນຳສາສະໜາໄດ້ຕັດສິນໃຈຕໍ່ຕ້ານຄຳສອນເລື່ອງການສະເດັດມາຂອງພຣະຄຣິສ ແລະ ພະຍາຍາມຢັບຢັ້ງບໍ່ໃຫ້ມີການເວົ້າຈາເຖິງເລື່ອງດັ່ງກ່າວ, ພວກເຂົາບໍ່ພຽງແຕ່ເທດສະໜາຕໍ່ຕ້ານເທົ່ານັ້ນ ແຕ່ຍັງຫ້າມສະມາຊິກບໍ່ໃຫ້ໄປຮ່ວມຟັງປະຊຸມທີ່ມີການປະກາດເຖິງການສະເດັດມາຂອງພຣະຄຣິສ ແລະ ຫ້າມບໍ່ໃຫ້ເວົ້າເຖິງຄວາມຫວັງຂອງຕົນໃນການປະຊຸມສັງສັນຂອງຄຣິສຕະຈັກ. ດັ່ງນັ້ນ, ຜູ້ທີ່ເຊື່ອຈຶ່ງຖືກທົດສອບຄວາມເຊື່ອຢ່າງໜັກ ແລະ ຕົກຢູ່ໃນສະພາບທີ່ສັບສົນ

[1] ບຼິສ (Bliss), ໜ້າ 328.

ງຸນງົງ. ພວກເຂົາຮັກຄຣິສຕະຈັກຂອງຕົນ ແລະ ບໍ່ຢາກແຍກອອກຈາກຄຣິສຕະຈັກ; ແຕ່ເມື່ອເຫັນວ່າ ມີການປິດກັ້ນ ບໍ່ໃຫ້ຄົນເປັນພະຍານເຖິງພຣະຄຳຂອງພຣະເຈົ້າ ແລະ ມີການຕັດສິດທິໃນການຄົ້ນຄວ້າ ຄຳພະຍາກອນ, ພວກເຂົາຮູ້ສຶກວ່າ ຖ້າຈະຈົງຮັກພັກດີຕໍ່ພຣະເຈົ້າຕໍ່ໄປ ກໍຈະບໍ່ສາມາດຍອມຮັບທີ່ຈະເຮັດຕາມຂໍ້ຫ້າມດັ່ງກ່າວ. ພວກເຂົາຖືວ່າຜູ້ທີ່ພະຍາຍາມປົກປິດຄຳສອນໃນພຣະຄຳພີ ບໍ່ແມ່ນຊຸມນຸມຜູ້ເຊື່ອໃນພຣະຄຣິສ, ບໍ່ແມ່ນ “ຄຣິສຕະຈັກຂອງພຣະເຈົ້າອົງຊົງຊີວິດຢູ່ ທີ່ເປັນເສົາ ແລະ ເປັນຮາກແຫ່ງຄວາມຈິງ.” (1 ຕີໂມທຽວ 3:15). ດັ່ງນັ້ນ, ພວກເຂົາຈຶ່ງຮູ້ສຶກວ່າ ມີເຫດຜົນໃນການແຍກຕົວ. ໃນລະດູຮ້ອນຂອງປີ 1844 ມີປະມານ 50,000 ຄົນ ຖອນຕົວອອກຈາກຄຣິສຕະຈັກຕ່າງ ໆ. {GC 376.1}

ຊ່ວງເວລານີ້, ມີການປ່ຽນແປງທີ່ເຫັນໄດ້ຢ່າງຈະແຈ້ງຢູ່ໃນຄຣິສຕະຈັກສ່ວນໃຫຍ່ຂອງສະຫະລັດອາເມຣິກາ. ກ່ອນໜ້ານັ້ນຫຼາຍປີ, ສະພາບຈິດວິນຍານຂອງຄົນໃນຄຣິສຕະຈັກທັງຫຼາຍຄ່ອຍ ໆ ເຢັນລົງ ໃນຂະນະທີ່ພວກເຂົາປັບປ່ຽນຊີວິດໃຫ້ສອດຄ່ອງກັບການປະຕິບັດຂອງຊາວໂລກ ແລະ ຄ້ອຍຕາມຮີດຄອງປະເພນີຂອງມະນຸດ. ແຕ່ໃນປີ 1844, ມີຫຼັກຖານວ່າ ມີຄວາມເສື່ອມລົງຢ່າງກະທັນຫັນຢູ່ໃນຄຣິສຕະຈັກເກືອບທັງໝົດໃນອາເມຣິກາ. ເຖິງແມ່ນວ່າ ບໍ່ມີໃຜບອກເຖິງສາເຫດຂອງການເສື່ອມຖອຍດ້ານຈິດວິນຍານນັ້ນ, ແຕ່ມີຫຼາຍຄົນສັງເກດ ແລະ ອອກຄວາມຄິດເຫັນທັງໃນໜັງສືພິມ ແລະ ໃນຄຳເທດສະໜາ. {GC 376.2}

ໃນກອງປະຊຸມຂອງສາສະໜາຈານໃນເມືອງຟີລາເດັນເຟຍ, ອາຈານບານສ໌ຜູ້ຊຽນຕຳລາອະທິບາຍພຣະຄຳພີທີ່ມີຄົນນິຍົມຢ່າງກວ້າງຂວາງ ແລະ ເປັນສາສະໜາຈານຂອງຄຣິສຕະຈັກໃຫຍ່ແຫ່ງໜຶ່ງໃນເມືອງນັ້ນ “ໄດ້ກ່າວວ່າ, ເພິ່ນເປັນສາສະໜາຈານມາແລ້ວ 20 ປີ ແລະ ຄັ້ງຫຼ້າສຸດເປັນຄັ້ງທຳອິດທີ່ເພິ່ນປະກອບພິທີມະຫາສະໜິດ ໂດຍບໍ່ມີຄົນໃໝ່ເຂົ້າມາເປັນສະມາຊິກຄຣິສຕະຈັກ. ໃນຊ່ວງນີ້*ບໍ່ມີຄົນກັບໃຈ, ບໍ່ມີການຕື່ນຕົວ*; ສ່ວນສະມາຊິກກໍບໍ່ເຕີບໂຕໃນພຣະຄຸນ, ບໍ່ມີໃຜໄປຖາມອາຈານເລື່ອງຄວາມລອດ. ຍິ່ງມີການເພີ່ມຂຶ້ນຂອງທຸລະກິດ, ການຄ້າຂາຍ ແລະ ການຜະລິດ, ຄົນຍິ່ງມີຈິດໃຈຝັກໃຝ່ຝ່າຍໂລກຫຼາຍຂຶ້ນ. *ສະພາບນີ້ໄດ້ເກີດຂຶ້ນໃນທຸກຄະນະນິກາຍ.*”[2] {GC 376.3}

ໃນເດືອນກຸມພາຂອງປີດຽວກັນ, ສາດສະດາຈານ ຟິນນີ (Finney) ຜູ້ປະຈຳຢູ່ວິທະຍາໄລ ໂອເບີລິນ (Oberlin) ໄດ້ກ່າວວ່າ: “ມີຄວາມຈິງຢູ່ຂໍ້ໜຶ່ງປາກົດແຈ້ງຢູ່ໃນໃຈຂອງພວກເຮົາວ່າ, ໂດຍທົ່ວໄປແລ້ວ ຄຣິສຕະຈັກຝ່າຍໂປຣແຕັສຕັງໃນປະເທດຂອງເຮົານີ້ ສ່ວນໜຶ່ງບໍ່ສົນໃຈໃນການປະຕິຮູບຕ່າງ ໆ ດ້ານສິນລະທຳ ແລະ ສ່ວນທີ່ເຫຼືອກໍຕໍ່ຕ້ານ. ມີຂໍ້ຍົກເວັ້ນຢູ່ ແຕ່ບໍ່ພຽງພໍທີ່ຈະປ່ຽນຄວາມຈິງທີ່ກ່າວມານີ້; ນອກຈາກນັ້ນ, ກໍຍັງມີຂໍ້ເທັດຈິງອີກຢ່າງໜຶ່ງທີ່ຢືນຢັນເຖິງຂໍ້ສະຫຼຸບຂ້າງຕົ້ນ, ນັ້ນຄືເກືອບທຸກຄຣິສຕະຈັກຂາດການຟື້ນຟູ. ຄວາມບໍ່ເອົາໃຈໃສ່ເລື່ອງຝ່າຍຈິດວິນຍານພົບເຫັນຢູ່ທົ່ວໄປ ແລະ ເປັນຄວາມເມີນເສີຍທີ່ໜັກໜ່ວງຢ່າງໜ້າເປັນຫ່ວງ. ວາລະສານຂອງຄຣິສຕະຈັກທັງຫຼາຍກໍຢືນຢັນເຖິງເລື່ອງນີ້. . . . ສະມາຊິກຂອງຄຣິສຕະຈັກສ່ວນໃຫຍ່ໄລ່ຕາມແຟຊັ່ນ ແລະ ເຂົ້າຮ່ວມກັບຄົນອະທຳໃນງານລ້ຽງເຮຮາ, ການເຕັ້ນລຳທຳເພງ, ງານສະເຫຼີມສະຫຼອງ ແລະ ງານອື່ນ ໆ ໃນທຳນອງດຽວກັນ; . . . ແຕ່ເຮົາບໍ່ຈຳເປັນຕ້ອງຂະຫຍາຍຫົວຂໍ້ດັ່ງກ່າວໃຫ້ເຈັບປວດຫຼາຍກວ່ານີ້. ທີ່ກ່າວມານັ້ນເປັນຫຼັກຖານອັນໜັກແໜ້ນ ແລະ ພຽງພໍທີ່ຈະສະແດງໃຫ້ເຫັນວ່າ *ຄຣິສຕະຈັກທັງຫຼາຍໂດຍທົ່ວໄປ ກຳລັງເສື່ອມເສຍຢ່າງໜ້າເສົ້າ.* ພວກເຂົາຫ່າງເຫີນຈາກພຣະເຈົ້າໄປໄກ ແລະ ພຣະອົງຊົງຖອຍໄປຈາກພວກເຂົາ.” {GC 377.1}

[2] ໜັງສືພິມ *Congregational Journal*, ວັນທີ 23 ພຶດສະພາ 1844.

ມີນັກຂຽນໃນໜັງສືພິມ *ກ້ອງສ່ອງຝ່າຍສາສະໜາ* (Religious Telescope) ອອກຄວາມເຫັນວ່າ: “ພວກເຮົາບໍ່ເຄີຍເຫັນຄວາມເສື່ອມຖອຍທາງສາສະໜາ ເໝືອນກັບທີ່ພົບເຫັນທົ່ວໄປໃນປັດຈຸບັນ. ແທ້ຈິງແລ້ວ, ຄຣິສຕະຈັກທັງຫຼາຍຄວນຕື່ນຂຶ້ນ ແລະ ຊອກຫາສາເຫດຂອງພະຍາດໂຣຄາຝ່າຍຈິດວິນຍານນີ້, ເພາະທຸກຄົນທີ່ຮັກຊີໂອນຕ້ອງເຫັນວ່າ ສະພາບດັ່ງກ່າວຄືການປ່ວຍດ້ານຈິດວິນຍານ. ເມື່ອເຮົາລະນຶກໄດ້ວ່າ ກຳລະນີການກັບໃຈໃໝ່ທີ່ແທ້ຈິງມີໜ້ອຍຫຼາຍ ແລະ ພິຈາລະນາເຖິງສະພາບຈິດໃຈຂອງຄົນບາບທີ່ໂອ້ອັງແຂງກະດ້າງຢ່າງບໍ່ມີບ່ອນປຽບປານ, ເຮົາເຖິງກັບຕ້ອງຮ້ອງອອກມາໂດຍບໍ່ຕັ້ງໃຈວ່າ, ‘ພຣະເຈົ້າລືມພຣະຄຸນຂອງພຣະອົງແລ້ວບໍ? ປະຕູແຫ່ງຄວາມເມດຕາປິດແລ້ວບໍ?’” *{GC 377.2}*

ການປະຕິເສດຄວາມສະຫວ່າງ

ສະພາບດັ່ງກ່າວ ບໍ່ເຄີຍເກີດຂຶ້ນໂດຍປາສະຈາກສາເຫດໃນຄຣິສຕະຈັກເອງ. ຄວາມມືດຝ່າຍຈິດວິນຍານທີ່ປົກຄຸມຢູ່ເໜືອປະເທດຊາດ, ເໜືອຄຣິສຕະຈັກ ຫຼື ເໜືອບຸກຄົນໃດບຸກຄົນໜຶ່ງ ບໍ່ໄດ້ເກີດຍ້ອນພຣະເຈົ້າຊົງຖອນພຣະຄຸນອອກໄປຕາມແຕ່ອຳນາດຂອງພຣະອົງ, ແຕ່ເກີດຂຶ້ນຍ້ອນມະນຸດຕ່າງຫາກໄດ້ປະຕິເສດ ຫຼື ບໍ່ໃສ່ໃຈຕໍ່ແສງແຫ່ງຄວາມຈິງທີ່ສ່ອງມາຈາກສະຫວັນ. ຕົວຢ່າງຂອງເລື່ອງນີ້ ເຫັນໄດ້ຢ່າງຈະແຈ້ງໃນປະຫວັດສາດຂອງຊາວຢິວໃນສະໄໝຂອງພຣະເຢຊູຄຣິສ. ພວກເຂົາຕິດຕາມກະແສນິຍົມຝ່າຍໂລກ ແລະ ລືມພຣະເຈົ້າກັບພຣະຄຳຂອງພຣະອົງ ຈົນຈິດໃຈຕ່ຳຊ້າ ແລະ ຄວາມເຂົ້າໃຈມືດມົວລົງ. ດ້ວຍເຫດນີ້, ພວກເຂົາຈຶ່ງບໍ່ໄດ້ຮັບຮູ້ເຖິງການສະເດັດມາຂອງພຣະເມຊີອາ ແລະ ໄດ້ປະຕິເສດພຣະຜູ້ໄຖ່ ຍ້ອນຈິດໃຈຂອງພວກເຂົາທີ່ທະນົງຕົວ ແລະ ຂາດຄວາມເຊື່ອ. ຢ່າງໃດກໍຕາມ, ພຣະເຈົ້າຍັງບໍ່ໄດ້ປິດໂອກາດໃຫ້ກັບຊົນຊາດຢິວທີ່ຈະໄດ້ຮັບຄວາມຮູ້ ແລະ ມີສ່ວນໃນພຣະພອນແຫ່ງຄວາມລອດ. ແຕ່ຄົນທີ່ປະຕິເສດຄວາມຈິງ ໄດ້ສູນເສຍຄວາມປາຖະໜາທັງໝົດທີ່ຈະໄດ້ຮັບຂອງປະທານຈາກສະຫວັນ. ພວກເຂົາໄດ້ “ປ່ຽນມືດເປັນແຈ້ງ ແລະ ແຈ້ງເປັນມືດ” (ເອຊາຢາ 5:20) ຈົນໃນທີ່ສຸດຄວາມສະຫວ່າງທີ່ຢູ່ໃນໃຈຂອງພວກເຂົານັ້ນ ໄດ້ກາຍເປັນຄວາມມືດ ແລະ ເປັນຄວາມມືດດຳທີ່ໜາທຶບ! *{GC 377.3}*

ມັນເປັນໄປຕາມແຜນຍຸດທະສາດຂອງຊາຕານ ທີ່ຈະໃຫ້ມະນຸດຮັກສາຮູບແບບຂອງສາສະໜາເອົາໄວ້ ໃນຂະນະທີ່ຈິດໃຈຂອງພວກເຂົາຂາດການເຕີບໂຕໃນທາງຂອງພຣະເຈົ້າ. ຫຼັງຈາກທີ່ໄດ້ປະຕິເສດຂ່າວປະເສີດແລ້ວ, ຊາວຢິວໃນສະໄໝຂອງພຣະເຢຊູ ກໍຍັງສືບຕໍ່ຮັກສາພິທີກຳທາງສາສະໜາອັນເກົ່າແກ່ຂອງພວກເຂົາຢ່າງກະຕືລືລົ້ນ; ພວກເຂົາຍັງຮັກສາເອກະລັກຂອງຊາດໄວ້ຢ່າງເຂັ້ມແຂງ, ໃນຂະນະທີ່ຕ້ອງຍອມຮັບວ່າ ພຣະເຈົ້າບໍ່ໄດ້ສະຖິດຢູ່ທ່າມກາງພວກເຂົາແລ້ວ. ຄຳພະຍາກອນຂອງດານີເອນ ໄດ້ທຳນວາຍເຖິງເວລາທີ່ພຣະເມຊີອາຈະສະເດັດມາຢ່າງແນ່ນອນ ແລະ ບອກລ່ວງໜ້າເຖິງການສິ້ນພຣະຊົນຂອງພຣະອົງໂດຍກົງ, ຈົນພວກອາຈານຊາວຢິວຫ້າມບໍ່ໃຫ້ຊາວຢິວສຶກສາຄຳພະຍາກອນດັ່ງກ່າວ. ໃນທີ່ສຸດພວກເຂົາປະກາດວ່າ ຖ້າຜູ້ໃດພະຍາຍາມຄຳນວນເວລາໃນຄຳພະຍາກອນນັ້ນ ຈະຕ້ອງຖືກສາບແຊ່ງ. ຊາວຢິວກຳຢູ່ໃນສະພາບທີ່ດື້ດ້ານຕາບອດຕະຫຼອດມາຫຼາຍສະຕະວັດ, ພວກເຂົາບໍ່ຮັບຮູ້ເຖິງຄວາມລອດພົ້ນ ທີ່ພຣະເຈົ້າປະທານໃຫ້ໂດຍພຣະຄຸນຂອງພຣະອົງ ແລະ ບໍ່ໄດ້ຮັບຮູ້ເຖິງພຣະພອນຂອງຂ່າວປະເສີດ. ປະຫວັດສາດຊາວຢິວຈຶ່ງເປັນອຸທາຫອນທີ່ໜ້າຢ້ານ ເຖິງອັນຕະລາຍຂອງການປະຕິເສດແສງສະຫວ່າງຈາກສະຫວັນ. *{GC 378.1}*

ເລື່ອງນີ້ກໍເປັນໄປຕາມກົດຂອງເຫດ ແລະ ຜົນ; ທີ່ໃດມີເຫດດັ່ງກ່າວ ທີ່ນັ້ນກໍຈະເກີດຜົນແບບດຽວກັນ. ຜູ້ໃດດັບສູງຂອງຈິດສຳນຶກໃນເລື່ອງໜ້າທີ່ຮັບຜິດຊອບ ຍ້ອນມັນຂັດຕໍ່ຄວາມຕ້ອງການຂອງຕົນ, ໃນທີ່ສຸດ

ຜູ້ນັ້ນຈະສູນເສຍຄວາມສາມາດໃນການຈຳແນກລະຫວ່າງຄວາມຈິງ ແລະ ຄວາມເທັດ. ຄວາມເຂົ້າໃຈ ຂອງຜູ້ນັ້ນຈະມືດມົວລົງ, ຈິດສຳນຶກຜິດຊອບຈະດ້ານຊາ, ຈິດໃຈຈະແຂງກະດ້າງ ແລະ ຈິດວິນຍານ ກໍຈະຖືກແຍກອອກຈາກພຣະເຈົ້າ. ຂ່າວຄວາມຈິງຈາກສະຫວັນຖືກປະຕິເສດ ຫຼື ຖືກດູໝິ່ນຢູ່ບ່ອນ ໃດ ຄຣິສຕະຈັກທີ່ນັ້ນຈະຖືກຕໍ່ຫຸ້ມດ້ວຍຄວາມມືດ; ຄວາມເຊື່ອ ແລະ ຄວາມຮັກຂອງສະມາຊິກຈະ ເຢັນລົງ ແລະ ຈະເກີດຄວາມຂັດແຍ້ງ ແລະ ຄວາມແຕກແຍກກັນ. ສະມາຊິກຂອງຄຣິສຕະຈັກຈະມຸ່ງ ຄວາມສົນໃຈ ແລະ ຄວາມພະຍາຍາມຂອງຕົນໃນກິດຈະກຳຝ່າຍໂລກ ແລະ ຄົນບາບກໍຈະຍິ່ງມີໃຈ ແຂງກະດ້າງ ແລະ ບໍ່ຍອມຮັບເຊື່ອພຣະເຈົ້າ. {GC 378.2}

ຂ່າວທູດສະຫວັນອົງທີໜຶ່ງ

ຂ່າວຂອງທູດສະຫວັນອົງທີໜຶ່ງ ທີ່ຂຽນໄວ້ໃນພຣະນິມິດບົດທີ 14 ໄດ້ປະກາດວ່າ ເວລາທີ່ພຣະເຈົ້າຈະ ຊົງພິພາກສານັ້ນມາເຖິງແລ້ວ, ໃຫ້ທຸກຄົນຢຳເກງ ແລະ ນະມັດສະການພຣະອົງ. ຂ່າວນີ້ມີຈຸດປະສົງ ໃນ ການແຍກຄົນຂອງພຣະເຈົ້າອອກຈາກອິດທິພົນເສື່ອມເສຍຝ່າຍໂລກ ແລະ ການກະຕຸ້ນສະມາຊິກໃຫ້ ເຫັນສະພາບທີ່ແທ້ຈິງຂອງຕົນເອງວ່າ ຕົນໄດ້ຫ່າງເຫີນຈາກພຣະເຈົ້າ ແລະ ຫຼົງໄປຕາມຝ່າຍໂລກພຽງ ໃດ. ໃນຂ່າວຂອງທູດສະຫວັນອົງທີໜຶ່ງນີ້ ພຣະເຈົ້າຊົງເຕືອນຄຣິສຕະຈັກ; ເຊິ່ງຖ້າຫາກຄຣິສຕະຈັກໄດ້ ຮັບຄຳຕັກເຕືອນ ກໍຈະແກ້ໄຂຄວາມຊົ່ວຮ້າຍທີ່ເປັນເຫດປິດບັງພວກເຂົາໄວ້ຈາກພຣະເຈົ້າ. ຖ້າພວກເຂົາ ໄດ້ຮັບເອົາຂ່າວສານຈາກສະຫວັນ, ຖ່ອມໃຈລົງຕໍ່ພຣະອົງ ແລະ ສະແຫວງຫາທີ່ຈະຢືນຢູ່ຕໍ່ໜ້າພຣະພັກ ຂອງພຣະເຈົ້າດ້ວຍຄວາມຈິງໃຈ, ພຣະວິນຍານ ແລະ ຣິດອຳນາດຂອງພຣະອົງກໍຈະປາກົດຢູ່ທ່າມກາງ ພວກເຂົາ. ຄຣິສຕະຈັກກໍຈະບັນລຸເຖິງຄວາມເປັນອັນໜຶ່ງອັນດຽວກັນ, ຈະມີຄວາມເຊື່ອ ແລະ ຄວາມ ຮັກເໝືອນໃນສະໄໝຂອງພວກອັກຄະສາວົກ; ຄືຈະເປັນໄປຕາມຍຸກສະໄໝທຳອິດທີ່ສະມາຊິກ “ເປັນນ້ຳ ໜຶ່ງໃຈດຽວກັນ” “ຈົ່ງປະກາດພຣະທຳຂອງພຣະເຈົ້າດ້ວຍໃຈກ້າຫານ” ແລະ “ອົງພຣະຜູ້ເປັນເຈົ້າໄດ້ຊົງ ໂຜດໃຫ້ມີຄົນທີ່ເຊື່ອເພີ່ມຈຳນວນຂຶ້ນທຸກ ໆ ວັນ.” (ກິດຈະການ 4:32, 31; 2:47). {GC 379.1}

ຖ້າຫາກຄົນທີ່ມີຊື່ວ່າເປັນຄົນຂອງພຣະເຈົ້າ ໄດ້ຮັບເອົາແສງສະຫວ່າງທີ່ສ່ອງມາຈາກພຣະຄຳຂອງ ພຣະອົງ, ພວກເຂົາຈະເປັນອັນໜຶ່ງອັນດຽວກັນຕາມທີ່ພຣະຄຣິສຊົງອະທິຖານໄວ້, ຄືຈະເປັນໄປຕາມ ສະພາບທີ່ອັກຄະສາວົກໂປໂລກ່າວເຖິງວ່າ: “ເປັນນ້ຳໜຶ່ງໃຈດຽວກັນໃນພຣະວິນຍານໂດຍມີສັນຕິສຸກ ເປັນເຄື່ອງຜູກມັດ.” “ມີຮ່າງກາຍ*ດຽວ* ແລະ ພຣະວິນຍານ*ອົງດຽວ* ເໝືອນກັບທີ່ພວກເຈົ້າໄດ້ຖືກ ເອີ້ນມາສູ່ຄວາມຫວັງ*ດຽວ* ເມື່ອພວກເຈົ້າໄດ້ຖືກເອີ້ນນັ້ນ; ມີອົງພຣະຜູ້ເປັນເຈົ້າ*ອົງດຽວ*, ຄວາມເຊື່ອ ດຽວ, ບັບຕິສະມາ*ດຽວ*.” (ເອເຟໂຊ 4:3–5 LCV). {GC 379.2}

ນັ້ນແມ່ນຜົນອັນໜ້າຍິນດີ ເຊິ່ງຄົນທັງຫຼາຍທີ່ຮັບເອົາຂ່າວເລື່ອງການສະເດັດມາຂອງພຣະຄຣິສໄດ້ ຮັບ. ພວກເຂົາມາຈາກຄະນະນິກາຍທີ່ມີຫຼັກຂໍ້ເຊື່ອທີ່ແຕກຕ່າງກັນ, ແຕ່ບໍ່ໄດ້ຖືວ່າຄວາມແຕກຕ່າງນັ້ນ ເປັນອຸປະສັກ; ພວກເຂົາຖືວ່າຄຳສອນທີ່ຂັດແຍ້ງກັນນັ້ນບໍ່ແມ່ນເລື່ອງສຳຄັນ ທັງໄດ້ປະຖິ້ມຄວາມຫວັງທີ່ ວ່າ ໂລກຈະປະສົບກັບຄວາມຮຸ່ງເຮືອງ 1,000 ປີ, ເພາະມັນຂັດແຍ້ງກັບຄຳສອນໃນພຣະຄຳພີ. ຄວາມ ເຂົ້າໃຈຜິດໃນເລື່ອງການສະເດັດກັບມາຂອງພຣະຄຣິສ ກໍໄດ້ຮັບການແກ້ໄຂໃຫ້ຖືກຕ້ອງ; ຄວາມ ທະນົງຕົວ ແລະ ຄວາມນິຍົມຝ່າຍໂລກໄດ້ປ່ຽນໄປ; ຄົນທີ່ຜິດໃຈກໍໄດ້ຄືນດີກັນ; ທຸກຄົນເປັນນ້ຳໜຶ່ງ ໃຈດຽວກັນໃນຄວາມຮັກ ແລະ ຄວາມຊົມຊື່ນຍິນດີ. ທັງໝົດນີ້ ເປັນຜົນດີທີ່ເກີດຂຶ້ນກັບຄົນຈຳນວນ ໜ້ອຍ ທີ່ໄດ້ຮັບເອົາຂ່າວຂອງທູດສະຫວັນອົງທີໜຶ່ງ, ຖ້າຫາກຄົນອື່ນໄດ້ຮັບເອົາຂ່າວສານດັ່ງກ່າວ ກໍຈະ ໄດ້ຮັບຜົນແບບດຽວກັນ. {GC 379.3}

ໂດຍທົ່ວໄປແລ້ວ, ຄຣິສຕະຈັກທັງຫຼາຍບໍ່ໄດ້ຍອມຮັບຄຳຕັກເຕືອນນັ້ນ. ພວກສາສະໜາຈານຄວນເຮັດໜ້າທີ່ “ຜູ້ເຝົ້າຍາມຊົນຊາດອິດສະຣາເອນ” (ເອເຊກຽນ 3:17; 33:7) ແລະ ຄວນເປັນກຸ່ມຄົນທຳອິດທີ່ສັງເກດເຫັນໝາຍສຳຄັນຂອງການສະເດັດກັບມາຂອງພຣະເຢຊູ; ແຕ່ພວກເຂົາກັບບໍ່ໄດ້ຮຽນຮູ້ຄວາມຈິງ ບໍ່ວ່າຈະເປັນຈາກພວກຜູ້ເຜີຍພຣະທຳ ຫຼື ຈາກໝາຍສຳຄັນແຫ່ງຍຸກສະໄໝ. ເມື່ອຄວາມໃຝ່ຝັນ ແລະ ຄວາມທະເຍີທະຍານຝ່າຍໂລກເຕັມລົ້ນຫົວໃຈ, ຄວາມຮັກທີ່ມີຕໍ່ພຣະເຈົ້າ ແລະ ຄວາມເຊື່ອໃນພຣະຄຳຂອງພຣະອົງກໍເຢັນຊາລົງ; ເມື່ອມີການນຳສະເໜີຄຳສອນເລື່ອງການສະເດັດກັບມາຂອງພຣະຄຣິສ, ພວກເຂົາບໍ່ເຊື່ອ ແຕ່ກັບມີອະຄະຕິ ແລະ ຕໍ່ຕ້ານຄຳສອນດັ່ງກ່າວ. ບາງຄົນໃຫ້ເຫດຜົນໃນການຕໍ່ຕ້ານວ່າ ສ່ວນໃຫຍ່ຜູ້ທີ່ປະກາດເລື່ອງການສະເດັດກັບມາຂອງພຣະຄຣິສ ເປັນສະມາຊິກທົ່ວໄປ. ຄົນເຫຼົ່ານີ້ຕອບໂຕ້ການປະກາດ ດ້ວຍເຫດຜົນດຽວກັນທີ່ຊາວຢິວໃຊ້ໃນສະໄໝຂອງພຣະເຢຊູວ່າ: “ມີຜູ້ໃດໃນພວກເຈົ້າໜ້າທີ່ ຫຼື ພວກຟາຣີຊາຍເຊື່ອໃນມັນບໍ?” (ໂຢຮັນ 7:48). ເມື່ອພວກສາສະໜາຈານບໍ່ສາມາດໂຕ້ແຍ້ງຄຳສອນເລື່ອງໄລຍະເວລາແຫ່ງຄຳພະຍາກອນໄດ້, ພວກເຂົາຈຶ່ງຫ້າມບໍ່ໃຫ້ສະມາຊິກສຶກສາຄຳພະຍາກອນ, ໂດຍກ່າວວ່າ ພຣະທຳເຫຼົ່ານັ້ນຖືກປິດຜະໜຶກໄວ້ ຈຶ່ງບໍ່ສາມາດເຂົ້າໃຈໄດ້. ມີຄົນຈຳນວນຫຼວງຫຼາຍໄວ້ເນື້ອເຊື່ອໃຈອາຈານຂອງຕົນ ຈຶ່ງບໍ່ຍອມຟັງຄຳຕັກເຕືອນ; ສ່ວນບາງຄົນ, ເຖິງແມ່ນຈະເຊື່ອໝັ້ນວ່າຄຳສອນດັ່ງກ່າວເປັນຄວາມຈິງ, ແຕ່ກໍບໍ່ກ້າຍອມຮັບ ເພາະຢ້ານວ່າຈະຖືກ “ໄລ່ອອກຈາກທຳມະສາລາ.” (ໂຢຮັນ 12:42). ຂ່າວສານທີ່ພຣະເຈົ້າປະທານມາເພື່ອທົດສອບ ແລະ ຊຳລະຄຣິສຕະຈັກນັ້ນ ໄດ້ເປີດເຜີຍໃຫ້ເຫັນຢ່າງຈະແຈ້ງວ່າ ຄົນທີ່ຮັກໂລກຫຼາຍກວ່າຮັກພຣະຄຣິສມີຈຳນວນມະຫາສານ. ສິ່ງທີ່ຜູກມັດພວກເຂົາໄວ້ກັບໂລກ ເຂັ້ມແຂງກວ່າສິ່ງທີ່ດຶງດູດໄປທາງສະຫວັນ. ຄົນເຫຼົ່ານີ້ໄດ້ເລືອກທີ່ຈະຟັງສະຕິປັນຍາຝ່າຍໂລກ ຈຶ່ງຫັນໄປຈາກຂ່າວສານແຫ່ງຄວາມຈິງທີ່ສຳຫຼວດຈິດໃຈ. *{GC 380.1}*

ໃນການປະຕິເສດຄຳຕັກເຕືອນຂອງຂ່າວທູດສະຫວັນອົງທີໜຶ່ງ, ພວກເຂົາໄດ້ປະຕິເສດວິທີການທີ່ສະຫວັນຈັດໄວ້ເພື່ອຟື້ນຟູພວກເຂົາ. ຄົນເຫຼົ່ານີ້ໄດ້ປະຕິເສດຜູ້ປະກາດຂ່າວດັ່ງກ່າວ ຜູ້ພ້ອມທີ່ຈະຊ່ວຍເຫຼືອພວກເຂົາ ໃນການປັບປຸງແກ້ໄຂຄວາມຊົ່ວຮ້າຍທີ່ແຍກຕົນອອກຈາກພຣະເຈົ້າ; ຊ້ຳບໍ່ໜຳ, ພວກເຂົາກັບຫັນໄປສະແຫວງຫາການເປັນມິດກັບໂລກຢ່າງກະຕືລືລົ້ນຫຼາຍຍິ່ງຂຶ້ນ. ນີ້ແມ່ນສາເຫດຂອງສະພາບອັນໜ້າຢ້ານກົວຂອງບັນດາຄຣິສຕະຈັກໃນປີ 1844 ທີ່ພົວພັນກັບທາງຝ່າຍໂລກ, ຫຼົງໄປຈາກພຣະເຈົ້າ ແລະ ມີຈິດວິນຍານທີ່ຕາຍ. *{GC 380.2}*

ຂ່າວທູດສະຫວັນອົງທີສອງ

ໃນພຣະນິມິດບົດທີ 14 ທູດສະຫວັນອົງທີສອງໄດ້ຕາມຫຼັງອົງທີໜຶ່ງມາ ແລະ ປະກາດວ່າ: “ບາບີໂລນມະຫານະຄອນນັ້ນຫຼົ້ມຈົມແລ້ວ ຫຼົ້ມຈົມເສຍແລ້ວ ຄືນະຄອນທີ່ເຮັດໃຫ້ປະຊາຊາດທັງປວງດື່ມເຫຼົ້າແວງປຸກຢ່າງເຫຼືອເກີນຂອງຕົນ ຕາມຄວາມປາຖະໜາທາງກາມ.” (ພຣະນິມິດ 14:8). ຄຳວ່າ “ບາບີໂລນ” ມາຈາກຄຳວ່າ “ບາເບນ” ແລະ ໝາຍເຖິງຄວາມສັບສົນ. ພຣະຄຳພີໃຊ້ຄຳນີ້ເພື່ອສະແດງເຖິງສາສະໜາທຽມເທັດໃນຮູບແບບຕ່າງໆ ແລະ ສາສະໜາທີ່ຫຼົງໄປຈາກພຣະເຈົ້າ. ພຣະນິມິດບົດທີ 17 ກ່າວເຖິງບາບີໂລນໃນລັກສະນະເປັນຜູ້ຍິງຄົນໜຶ່ງ, ເຊິ່ງເປັນສັນຍະລັກໃນພຣະຄຳພີທີ່ໝາຍເຖິງຄຣິສຕະຈັກ: ແມ່ຍິງດີງາມໄດ້ແກ່ຄຣິສຕະຈັກທີ່ບໍຣິສຸດ, ສ່ວນຍິງຊົ່ວກໍໝາຍເຖິງຄຣິສຕະຈັກທີ່ຫຼົງໄປຈາກພຣະເຈົ້າ. *{GC 381.1}*

ພຣະຄຳພີໃຊ້ການແຕ່ງງານເປັນສັນຍະລັກຂອງຄວາມສຳພັນອັນສັກສິດ ແລະ ຍືນຍົງລະຫວ່າງພຣະຄຣິສກັບຄຣິສຕະຈັກຂອງພຣະອົງ. ອົງພຣະຜູ້ເປັນເຈົ້າຊົງຜູກພັນຄົນຂອງພຣະອົງໄວ້ກັບພຣະອົງ

ເອງດ້ວຍພັນທະສັນຍາ, ໂດຍພຣະອົງຊົງສັນຍາວ່າ ຈະເປັນພຣະເຈົ້າຂອງພວກເຂົາ ແລະ ພວກເຂົາ ສັນຍາວ່າ ຈະເປັນຄົນຂອງພຣະອົງພຽງຜູ້ດຽວ. ພຣະອົງຊົງກ່າວວ່າ: “ເຮົາຈະໝັ້ນເຈົ້າໄວ້ສຳລັບເຮົາ ເປັນນິດ, ເອີ ເຮົາຈະໝັ້ນເຈົ້າໄວ້ສຳລັບເຮົາດ້ວຍຄວາມຊອບທຳ, ຄວາມຍຸຕິທຳ, ຄວາມເມດຕາ ແລະ ຄວາມກະລຸນາ.” (ໂຮເສອາ 2:19 TKJV). ແລະມີອີກຂໍ້ໜຶ່ງກ່າວວ່າ: “ເຮົາແຕ່ງງານກັບເຈົ້າ ແລ້ວ.” (ເຢເຣມີຢາ 3:14 TKJV). ສ່ວນອາຈານໂປໂລກໍໃຊ້ສັນຍະລັກອັນດຽວກັນໃນພຣະຄຳພີໃໝ່ ເມື່ອ ເພິ່ນກ່າວວ່າ: “ພວກເຈົ້າເປັນດັ່ງເຈົ້າສາວບໍຣິສຸດ ທີ່ເຮົາສັນຍາໝັ້ນໝາຍໄວ້ໃຫ້ແຕ່ງງານກັບຊາຍຄົນ ດຽວເທົ່ານັ້ນ ຄືແກ່ພຣະຄຣິສ.” (2 ໂກຣິນໂທ 11:2). *{GC 381.2}*

ການຫຼິ້ນຊູ້ຝ່າຍຈິດວິນຍານ

ການທີ່ຄຣິສຕະຈັກບໍ່ສັດຊື່ຕໍ່ພຣະຄຣິສ ໃນການປ່ອຍຕົວໃຫ້ໝົກໝົ້ນຢູ່ກັບສິ່ງຂອງຝ່າຍໂລກ ແລະ ການປະຖິ້ມຄວາມຮັກກັບຄວາມເຊື່ອໝັ້ນທີ່ມີຕໍ່ພຣະອົງ ປຽບເໝືອນການເຮັດຜິດຕໍ່ຄຳໝັ້ນສັນຍາ ລະຫວ່າງສາມີກັບພັນລະຍາ. ພຣະຄຳພີໃຊ້ສັນຍະລັກດັ່ງກ່າວ ເພື່ອບັນລະຍາຍເຖິງຄວາມບາບຂອງ ຄົນອິດສະຣາເອນ ໃນການຫຼົງໄປຈາກພຣະເຈົ້າ; ນອກຈາກນັ້ນ, ກໍຍັງກ່າວເຖິງຄວາມຮັກອັນປະເສີດ ຂອງພຣະອົງ (ຄືຄວາມຮັກທີ່ພວກເຂົາໄດ້ດູຖູກນັ້ນ) ໂດຍນຳໃຊ້ສັນຍະລັກດຽວກັນນີ້ວ່າ: “ເຮົາໄດ້ເຮັດ ພັນທະສັນຍາແຕ່ງງານກັບເຈົ້າ ແລະ ເຈົ້າກໍເປັນຂອງເຮົາ. ອົງພຣະຜູ້ເປັນເຈົ້າ ພຣະເຈົ້າກ່າວດັ່ງ ນີ້ແຫຼະ.” “ຄວາມງາມຂອງເຈົ້າບາດຕາບາດໃຈ ແລະ ເຈົ້າກໍກາຍເປັນຣາຊິນີ, ເຈົ້າມີຊື່ສຽງໂດ່ງດັງໃນ ທຸກໆຊົນຊາດ ຍ້ອນຄວາມງາມອັນບໍ່ມີທີ່ຕິຂອງເຈົ້າ ເພາະເຮົາເປັນຜູ້ໄດ້ເຮັດໃຫ້ເຈົ້າໜ້າຮັກຫຼາຍທີ່ສຸດ . . . ແຕ່ເຈົ້າໄດ້ສອຍໃຊ້ຄວາມງາມກັບຊື່ສຽງຂອງເຈົ້ານັ້ນ ຫາຜົນປະໂຫຍດ ໂດຍນອນກັບທຸກຄົນທີ່ໄດ້ຜ່ານ ມາ.” ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເຈົ້າເປັນດັ່ງຍິງຜູ້ໜຶ່ງທີ່ຫຼິ້ນຊູ້ກັບຊາຍແປກໜ້າອື່ນໆ ແທນທີ່ຈະຮັກ ຜົວຂອງຕົນ.” “ເຈົ້າຍັງເປັນດັ່ງເມຍທີ່ຫຼິ້ນຊູ້ ແລະ ບໍ່ສັດຊື່” (ເອເຊກຽນ 16:8, 13–15, 32; ເຢເຣມີຢາ 3:20). *{GC 381.3}*

ໃນພຣະຄຳພີໃໝ່ ມີການຍົກຕົວຢ່າງທີ່ຄ້າຍຄືກັນ ເມື່ອກ່າວເຖິງຄົນທີ່ມີຊື່ວ່າເປັນຄຣິສຕຽນ ແຕ່ ກັບສະແຫວງຫາການເປັນມິດກັບໂລກຫຼາຍກວ່າການເປັນທີ່ພໍພຣະໄທຂອງພຣະເຈົ້າ. ອັກຄະສາວົກ ຢາໂກໂບກ່າວວ່າ: “ໂອ ຄົນຫຼິ້ນຊູ້ເອີຍ, ພວກເຈົ້າບໍ່ຮູ້ຫຼືວ່າ ການເປັນມິດຕໍ່ໂລກ ກໍຄືການເປັນສັດຕູຕໍ່ ພຣະເຈົ້າ? ສະນັ້ນ, ຜູ້ໃດທີ່ຢາກເປັນມິດຕໍ່ໂລກ ກໍເປັນສັດຕູຕໍ່ພຣະເຈົ້າ.” (ຢາໂກໂບ 4:4). *{GC 382.1}*

ພຣະຄຳພີບັນລະຍາຍເຖິງຜູ້ຍິງໃນພຣະນິມິດບົດທີ 17 ທີ່ມີຊື່ບາບີໂລນດັ່ງນີ້ວ່າ: ນາງໄດ້ “ນຸ່ງ ເຄື່ອງສີມ່ວງ ແລະ ສີແດງເຂັ້ມ ແລະ ປະດັບຕົວດ້ວຍເຄື່ອງຄຳ, ເພັດພອຍ ແລະ ໄຂ່ມຸກ. ໃນ ມືຂອງນາງມີຈອກຄຳ ທີ່ເຕັມແຕ່ມົນທິນອັນໜ້າຂີ້ດຽດ ເປັນຜົນແຫ່ງການຜິດສິນທຳທາງເພດຂອງ ນາງ. ທີ່ໜ້າຜາກມີຊື່ຂຽນໄວ້ເປັນຄວາມເລິກລັບວ່າ, ‘*ບາບີໂລນມະຫານະຄອນ ແມ່ຂອງໂສເພນີ ທັງຫຼາຍ.*’” ຜູ້ເຜີຍພຣະທຳກ່າວວ່າ: “ຂ້າພະເຈົ້າໄດ້ເຫັນຍິງຄົນນັ້ນເມົາດ້ວຍເລືອດໄພ່ພົນຂອງພຣະເຈົ້າ ແລະ ດ້ວຍເລືອດຂອງບັນດາຜູ້ທີ່ຍອມສະຫຼະຊີວິດ ເພາະເປັນພະຍານຝ່າຍພຣະເຢຊູເຈົ້າ.” ນອກຈາກ ນັ້ນ, ພຣະຄຳພີຍັງໄດ້ກ່າວເຖິງບາບີໂລນວ່າເປັນ “ມະຫານະຄອນທີ່ມີອຳນາດເໜືອບັນດາກະສັດ ທັງຫຼາຍທົ່ວແຜ່ນດິນໂລກ.” (ພຣະນິມິດ 17:4–6, 18). ເປັນເວລາຫຼາຍສະຕະວັດ, ອຳນາດ ຜະເດັດການທີ່ປົກຄອງຢູ່ເໜືອກະສັດທັງຫຼາຍໃນປະເທດທີ່ນັບຖືສາສະໜາຄຣິສ ຄືຄຣິສຕະຈັກໂຣມ ນັ້ນເອງ. ສີມ່ວງ, ສີແດງເຂັ້ມ, ຄຳ, ເພັດພອຍ ແລະ ໄຂ່ມຸກສະແດງໃຫ້ເຫັນຢ່າງຈະແຈ້ງເຖິງຄວາມ ຮຸ່ງເຮືອງ ແລະ ຄວາມໂອຫັງຂອງພວກສັນຕະປາປາທີ່ຍິ່ງໃຫຍ່ກວ່າກະສັດ. ບໍ່ມີອຳນາດອື່ນໃດໃນ

ປະຫວັດສາດໂລກທີ່ “ເມົາດ້ວຍເລືອດໄພ່ພົນຂອງພຣະເຈົ້າ” ເທົ່າກັບຄຣິສຕະຈັກໂຣມ ທີ່ກົດຂີ່ຂົ່ມເຫັງ ຜູ້ຕິດຕາມພຣະຄຣິສຢ່າງໂຫດຮ້າຍທາລຸນ. ນອກຈາກນີ້, ບາບີໂລນຍັງຖືກກ່າວຫາວ່າ ໄດ້ເຮັດບາບ ດ້ວຍການພົວພັນກັບ “ກະສັດທັງຫຼາຍທົ່ວແຜ່ນດິນໂລກ.” ຊົນຊາດຢິວຖືກກ່າວຫາວ່າເປັນຜູ້ຫຼົ່ນຊູ້ ເມື່ອ ພວກເຂົາປະຖິ້ມພຣະເຈົ້າ ແລະ ໄປຜູກພັນກັບຊົນຊາດທີ່ບໍ່ນັບຖືພຣະອົງ; ສ່ວນຄຣິສຕະຈັກໂຣມ ກໍຖືກກ່າວຫາແບບດຽວກັນ ຍ້ອນວ່າພວກເຂົາໄດ້ສະແຫວງຫາການສະໜັບສະໜູນຈາກອຳນາດຝ່າຍ ໂລກ ເຊັ່ນດຽວກັບຊົນຊາດຢິວ. {GC 382.2}

ພຣະຄຳພີກ່າວວ່າ, ບາບີໂລນເປັນ “*ແມ່*ຂອງໂສເພນີທັງຫຼາຍ.” ສະແດງວ່າ*ລູກສາວ*ຂອງນາງຕ້ອງ ເປັນສັນຍະລັກຂອງຄຣິສຕະຈັກທີ່ຍຶດໝັ້ນຢູ່ກັບຄຳສອນ ແລະ ປະເພນີຂອງຄຣິສຕະຈັກໂຣມ ແລະ ເຮັດ ຕາມແບບຢ່າງຂອງໂຣມ ໃນການສະຫຼະຄວາມຈິງກັບການເປັນທີ່ຍອມຮັບຂອງພຣະເຈົ້າ ເພື່ອເປັນ ພັນທະມິດກັບໂລກ ໂດຍຜິດກົດບັນຍັດຂອງພຣະອົງ. ຂ່າວສານໃນພຣະນິມິດບົດທີ 14 ທີ່ປະກາດ ເຖິງການ*ຫຼົ້ມຈົມ*ຂອງບາບີໂລນ ຕ້ອງໝາຍເຖິງຄຣິສຕະຈັກທີ່ເຄີຍບໍຣິສຸດ ແຕ່ໄດ້ເສື່ອມລົງ. ຂ່າວ ຂອງທູດສະຫວັນອົງທີສອງນີ້ ປະກາດຫຼັງຈາກການຕັກເຕືອນເລື່ອງການພິພາກສາ, ສະແດງວ່າມັນ ຕ້ອງເປັນເລື່ອງຂອງຍຸກສຸດທ້າຍ; ດັ່ງນັ້ນ, ຈຶ່ງບໍ່ສາມາດໝາຍເຖິງຄຣິສຕະຈັກໂຣມຢ່າງດຽວ ເພາະ ຄຣິສຕະຈັກນັ້ນຢູ່ໃນສະພາບທີ່ເສື່ອມຢູ່ຫຼາຍສະຕະວັດມາແລ້ວ. ຍິ່ງໄປກວ່ານັ້ນ, ໃນພຣະນິມິດບົດ ທີ 18 ມີການຂໍຮ້ອງຄົນຂອງພຣະເຈົ້າໃຫ້ອອກມາຈາກບາບີໂລນ. ອີງຕາມພຣະຄຳພີຕອນນີ້, ສະແດງ ວ່າຄົນຂອງພຣະເຈົ້າຫຼາຍຄົນຍັງຢູ່ໃນບາບີໂລນ. ໃນເວລານີ້, ຄົນຂອງພຣະເຈົ້າສ່ວນໃຫຍ່ຢູ່ໃນຄະນະ ນິກາຍອັນໃດແດ່? ແນ່ນອນ, ໃນຄຣິສຕະຈັກຕ່າງ ໆ ທີ່ເປັນໂປຣແຕັສຕັງ. ໃນສະໄໝທີ່ຄຣິສຕະຈັກ ເຫຼົ່ານີ້ເລີ່ມຂຶ້ນ, ພວກເຂົາໄດ້ຢືນຢັດເພື່ອພຣະເຈົ້າ ແລະ ຄວາມຈິງ ແລະ ພຣະອົງຊົງອວຍພອນ ພວກເຂົາ. ແມ່ນແຕ່ຊາວໂລກທີ່ບໍ່ເຊື່ອກໍຍັງຕ້ອງຍອມຮັບວ່າ ຜູ້ທີ່ປະຕິບັດຕາມຫຼັກການຂອງຂ່າວປະເສີດ ໄດ້ຮັບປະໂຫຍດຫຼາຍ. ດັ່ງຖ້ອຍຄຳຂອງຜູ້ເຜີຍພຣະທຳທີ່ກ່າວກ່ຽວກັບອິດສະຣາເອນວ່າ: “ເຈົ້າມີຊື່ສຽງ ໂດ່ງດັງໃນທຸກ ໆ ຊົນຊາດ ຍ້ອນຄວາມງາມອັນບໍ່ມີທີ່ຕິຂອງເຈົ້າ ເພາະເຮົາເປັນຜູ້ໄດ້ເຮັດໃຫ້ເຈົ້າ ໜ້າຮັກຫຼາຍທີ່ສຸດ. ອົງພຣະຜູ້ເປັນເຈົ້າ ພຣະເຈົ້າກ່າວດັ່ງນີ້ແຫຼະ.” ແຕ່ຄຣິສຕະຈັກເຫຼົ່ານັ້ນຕ້ອງລົ້ມ ລົງຍ້ອນຄວາມປາຖະໜາອັນດຽວກັນ ເຊິ່ງເປັນສາເຫດທີ່ຊົນຊາດອິດສະຣາເອນຖືກສາບແຊ່ງ, ຄື ຄວາມປາຖະໜາທີ່ຈະເຮັດຕາມແບບຢ່າງຂອງຄົນຊົ່ວ ແລະ ເປັນມິດກັບເຂົາ. “ເຈົ້າໄດ້ສວຍໃຊ້ ຄວາມງາມກັບຊື່ສຽງຂອງເຈົ້ານັ້ນຫາຜົນປະໂຫຍດ ໂດຍນອນກັບທຸກຄົນທີ່ໄດ້ຜ່ານມາ.” (ເອເຊກຽນ 16:14, 15). {GC 382.3}

ການເປັນໜຶ່ງດຽວກັນກັບຊາວໂລກ

ມີຄຣິສຕະຈັກນິກາຍໂປຣແຕັສຕັງຢູ່ຫຼາຍຄະນະ ທີ່ເຮັດຕາມແບບຢ່າງຂອງຄຣິສຕະຈັກໂຣມ ໂດຍເຂົ້າ ໄປພົວພັນຢ່າງຊົ່ວຮ້າຍກັບ “ກະສັດທັງຫຼາຍທົ່ວແຜ່ນດິນໂລກ.” ຄຣິສຕະຈັກປະຈຳຊາດຂອງປະເທດ ຕ່າງ ໆ ໄດ້ຜູກພັນຕົນເອງກັບອຳນາດລັດ, ສ່ວນຄະນະນິກາຍອື່ນ ໆ ກໍພະຍາຍາມເອົາໃຈຊາວໂລກ. ສະນັ້ນຄຳວ່າ “ບາບີໂລນ” ເຊິ່ງໝາຍເຖິງຄວາມສັບສົນ ກໍສາມາດນຳມາໃຊ້ກັບກຸ່ມຄຣິສຕະຈັກເຫຼົ່ານີ້ ໄດ້ຢ່າງເໝາະສົມ. ເຖິງແມ່ນວ່າພວກເຂົາໄດ້ອ້າງວ່າຄຳສອນຂອງຕົນມາຈາກພຣະຄຳພີ ແຕ່ກໍຍັງຖືກ ແບ່ງອອກເປັນຫຼາຍຄະນະຈົນນັບບໍ່ຖ້ວນ ເຊິ່ງຄຳສອນຂອງແຕ່ລະຄະນະກໍຂັດແຍ້ງກັນເອງ. {GC 383.1}

ນອກເໜືອໄປຈາກການເປັນໜຶ່ງດຽວກັບຊາວໂລກຢ່າງຜິດບາບແລ້ວ, ຄຣິສຕະຈັກທັງຫຼາຍທີ່ແຍກ ອອກຈາກຄຣິສຕະຈັກໂຣມ ກໍຍັງມີລັກສະນະບາງຢ່າງທີ່ເໝືອນກັບໂຣມຢູ່. {GC 383.2}

ໜັງສືກາໂຕລິກເຫຼັ້ມໜຶ່ງໃຫ້ຄວາມເຫັນວ່າ: "ຖ້າຫາກການນັບຖືພວກນັກບຸນຂອງຄຣິສຕະຈັກໂຣມ ເປັນຄວາມຜິດຕໍ່ພຣະບັນຍັດທີ່ຫ້າມການຂາບໄຫວ້ຮູບເຄົາລົບແລ້ວ, ກໍສະແດງວ່າຄຣິສຕະຈັກແຫ່ງອັງກິດ ອັນເປັນລູກສາວຂອງຄຣິສຕະຈັກໂຣມ ກໍມີຄວາມຜິດເໝືອນກັນ, ເພາະວ່າຄຣິສຕະຈັກແຫ່ງອັງກິດມີໂບດ 10 ແຫ່ງທີ່ໄດ້ຮັບການອຸທິດຖວາຍແກ່ມາຣີ ຕໍ່ໂບດ 1 ແຫ່ງທີ່ຖວາຍແດ່ພຣະຄຣິສ."[3] *{GC 384.1}*

ສ່ວນ ດຣ. ຮ໊ອບກິນສ໌ ກໍຂຽນບົດຄວາມ "ຂໍ້ຄິດເລື່ອງ 1,000 ປີ" ເຊິ່ງມີເນື້ອໃນວ່າ: "ບໍ່ມີເຫດຜົນທີ່ຈະສະຫຼຸບວ່າ ມີແຕ່ຄຣິສຕະຈັກໂຣມເທົ່ານັ້ນທີ່ມີອະຄະຕິ ແລະ ພຶດຕິກຳອັນເປັນສັດຕູຂອງພຣະຄຣິສ; ເພາະຄຣິສຕະຈັກໂປຣແຕັສຕັງມີລັກສະນະການເປັນສັດຕູຂອງພຣະຄຣິສເຊັ່ນດຽວກັນ ແລະ ບໍ່ໄດ້ຮັບການຟື້ນຟູຢ່າງແທ້ຈິງຈາກ . . . ຄວາມຊົ່ວຮ້າຍ."[4] *{GC 384.2}*

ດຣ. ກຸດຣີ ຂຽນເຖິງການແຍກຄຣິສຕະຈັກເປຣສະບີເທີຽນ (Presbyterian) ອອກຈາກຄຣິສຕະຈັກໂຣມວ່າ: "ເມື່ອ 300 ປີກ່ອນ, ຄຣິສຕະຈັກຂອງພວກເຮົາໄດ້ເດີນອອກຈາກປະຕູຂອງຄຣິສຕະຈັກໂຣມ ໂດຍມີຮູບ 'ພຣະຄຳພີເປີດ' ເປັນສັນຍະລັກ ແລະ ຄຳຂວັນວ່າ, 'ຈົ່ງຄົ້ນຫາພຣະຄຳພີ.'" ຈາກນັ້ນ, ເພິ່ນກໍມີຄຳຖາມທີ່ສຳຄັນວ່າ: "ພວກເຂົາໄດ້ອອກຈາກບາບີໂລນ*ຢ່າງສິ້ນເຊີງ*ແລ້ວບໍ?"[5] *{GC 384.3}*

ສ່ວນ ອາຈານ ສະເປີເຈນ (Spurgeon) ກ່າວວ່າ: "ຄຣິສຕະຈັກແຫ່ງອັງກິດເບິ່ງຄືວ່າ ພຸພັງຍ້ອນການນິຍົມພິທີກຳຈົນເກີນໄປ; ສ່ວນຄະນະຕ່າງ ໆ ທີ່ບໍ່ຍອມຮັບຄຣິສຕະຈັກແຫ່ງຊາດກໍພຸພັງພໍ ໆ ກັນ ຍ້ອນອີງປັດຊະຍາຈົນປະຖິ້ມຄວາມເຊື່ອ. ຜູ້ທີ່ເຮົາເຄີຍຄິດວ່າຈະດີນັ້ນ ກໍຫັນຈາກພື້ນຖານແຫ່ງຄວາມເຊື່ອໄປເທື່ອລະຄົນ. ຂ້າພະເຈົ້າເຊື່ອວ່າ ທົ່ວປະເທດອັງກິດ ມີຜູ້ເທດສະໜາທີ່ບໍ່ມີຄວາມເຊື່ອ ແຕ່ຍັງກ້າເອີ້ນຕົນເອງວ່າເປັນຄຣິສຕຽນ, ເຊິ່ງຄົນເຫຼົ່ານັ້ນສ່ຽງທີ່ຈະພົບກັບຄວາມພິນາດ." *{GC 384.4}*

ການປະຖິ້ມຂ່າວປະເສີດເບື້ອງຕົ້ນ

ການປະຖິ້ມຄວາມເຊື່ອຄັ້ງຍິ່ງໃຫຍ່ນັ້ນ ມີຕົ້ນຕໍສາເຫດມາແຕ່ໃສ? ຄຣິສຕະຈັກໄດ້ອອກໄປຈາກຄວາມລຽບງ່າຍຂອງຂ່າວປະເສີດ ເປັນເທື່ອທຳອິດໄດ້ຢ່າງໃດ? ຄຳຕອບກໍຄື: ໂດຍປະຕິບັດຕາມແບບຢ່າງຂອງຄົນທີ່ບໍ່ນັບຖືພຣະເຈົ້າ ເພື່ອໃຫ້ພວກເຂົາຍອມຮັບການເປັນຄຣິສຕຽນ. ອັກຄະສາວົກໂປໂລປະກາດວ່າ, ແມ່ນແຕ່ໃນສະໄໝຂອງເພິ່ນ "ອຳນາດອັນເລິກລັບແຫ່ງຄວາມຊົ່ວຮ້າຍ ກໍດຳເນີນການຢູ່ແລ້ວ." (2 ເທສະໂລນີກ 2:7). ໃນສະໄໝທີ່ພວກອັກຄະສາວົກຍັງມີຊີວິດຢູ່, ຄຣິສຕະຈັກສ່ວນໃຫຍ່ກໍບໍຣິສຸດ. ແຕ່ "ຊ່ວງທ້າຍຂອງສະຕະວັດທີ 2, ຄຣິສຕະຈັກສ່ວນຫຼາຍໄດ້ປ່ຽນຮູບແບບໃໝ່; ຄວາມລຽບງ່າຍທີ່ມີຢູ່ໃນຍຸກທຳອິດໄດ້ຫາຍໄປ; ເມື່ອພວກສາວົກລຸ້ນເກົ່າລ່ວງລັບໄປ, ລູກຂອງພວກເຂົາພ້ອມກັບຜູ້ທີ່ຮັບເຊື່ອໃໝ່ . . . ໄດ້ອອກມາປ່ຽນແປງຮູບແບບຂອງຄຣິສຕະຈັກ."[6] ພວກເຂົາຫຼຸດມາດຕະຖານອັນສູງສົ່ງແຫ່ງຄວາມເຊື່ອລົງ ເພື່ອຈະໄດ້ຄົນກັບໃຈຫຼາຍຂຶ້ນ; ຜົນທີ່ຕາມມາກໍຄື "ຄົນທີ່ນັບຖືຮູບເຄົາລົບ ກໍພາກັນຫຼັ່ງໄຫຼເຂົ້າມາໃນໂບດ ພ້ອມດ້ວຍຮີດຄອງປະເພນີ ແລະ ຮູບເຄົາລົບຂອງຕົນ."[7] ເມື່ອສາສະໜາຄຣິສກາຍເປັນທີ່ນິຍົມຂອງເຈົ້າໜ້າທີ່ ແລະ ໄດ້ຮັບການສະໜັບສະໜູນຈາກອຳນາດລັດ ມີຄົນຈຳນວນ

---

[3] ຣິດຊາດ ຊານໂລເນີ (Richard Challoner), *The Catholic Christian Instructed*, ຄຳນຳ, ໜ້າ 21, 22.

[4] *ງານຂຽນຂອງ ຊາມູເອນ ຮ໊ອບກິນສ໌* (Samuel Hopkins), ເຫຼັ້ມ 2, ໜ້າ 328.

[5] ໂທມັດ ກຸດຣີ (Thomas Guthrie), *ຂ່າວປະເສີດໃນພຣະທຳເອເຊກຽນ*, ໜ້າ 237.

[6] ໂຣເບີດ ໂຣບິນສັນ (Robert Robinson), *ງານວິໃຈເລື່ອງລະບົບຄຣິສຕະຈັກ*, ບົດທີ 6, ວັກ 17, ໜ້າ 51.

[7] *ຄຳປາໄສຂອງກາວາຊີ* (Gavazzi), ໜ້າ 278.

ຫຼວງຫຼາຍປະກາດວ່າ ຕົນເປັນຄຣິສຕຽນ; ແຕ່ຫຼາຍຄົນເປັນຄຣິສຕຽນພາຍນອກ ໃນຂະນະທີ່ "ຍັງຄົງ ຂາບໄຫວ້ຮູບເຄົາລົບຢູ່ຢ່າງລັບ ໆ."[8] *{GC 384.5}*

ເກືອບທຸກຄຣິສຕະຈັກທີ່ເອີ້ນຕົວເອງວ່າເປັນໂປຣແຕັສຕັງ ໄດ້ເຮັດຕາມຂັ້ນຕອນນີ້ບໍ່ແມ່ນບໍ? ເມື່ອຜູ້ ກໍ່ຕັ້ງຄຣິສຕະຈັກເຫຼົ່ານັ້ນ ທີ່ມີຈິດໃຈຂອງນັກປະຕິຮູບແທ້ລ່ວງລັບໄປ, ລູກຫຼານຂອງພວກເຂົາໄດ້ອອກ ມາ ແລະ "ປ່ຽນແປງຮູບແບບຂອງຄຣິສຕະຈັກ." ພວກເຂົາຢຶດໝັ້ນຢູ່ກັບຫຼັກຄຳສອນຂອງລຸ້ນບຸກເບີກ ຢ່າງຫົວປັກຫົວປຳ ແລະ ບໍ່ຍອມຮັບຂໍ້ຄວາມຈິງທີ່ນອກເໜືອຈາກຄວາມເຂົ້າໃຈຂອງບັນພະບຸລຸດ. ພວກ ນັກປະຕິຮູບ ໄດ້ວາງແບບຢ່າງເອົາໄວ້ໃນການຖ່ອມຕົວ, ການປະຕິເສດຕົນເອງ ແລະ ການປະຕິເສດຝ່າຍ ໂລກ, ແຕ່ລູກຫຼານໄດ້ປະຖິ້ມສິ່ງເຫຼົ່ານີ້ໄປໄກ. ດັ່ງນັ້ນ, ເມື່ອ "ຄວາມລຽບງ່າຍທຳອິດຫາຍໄປ" ຄວາມ ນິຍົມຝ່າຍໂລກຈຶ່ງຫຼັ່ງໄຫຼເຂົ້າຖ້ວມຄຣິສຕະຈັກ ພ້ອມດ້ວຍ "ຮີດຄອງປະເພນີ ແລະ ຮູບເຄົາລົບຂອງ ມັນ." *{GC 385.1}*

ເລື່ອງນີ້ເປັນຕາໜ້າອຸກໃຈແທ້, ເມື່ອຄົນທີ່ມີຊື່ວ່າເປັນຜູ້ຕິດຕາມພຣະຄຣິສໄດ້ເປັນມິດກັບໂລກເຖິງ ຂະໜາດນີ້, ເພາະການເປັນມິດກັບໂລກກໍຄື "ການເປັນສັດຕູຕໍ່ພຣະເຈົ້າ" (ຢາໂກໂບ 4:4). ຄຣິສຕະຈັກ ທີ່ມີຄົນນິຍົມຫຼາຍໃນປະເທດທີ່ຄົນສ່ວນໃຫຍ່ເປັນຄຣິສຕຽນ ໄດ້ປະຖິ້ມມາດຕະຖານຂອງພຣະຄຳພີເລື່ອງ ຄວາມຖ່ອມຕົວ, ການປະຕິເສດຕົນເອງ, ຄວາມລຽບງ່າຍ ແລະ ສິນລະທຳໄປໄກ! ຈອນ ເວສະລີ ກ່າວ ເຖິງການໃຊ້ເງິນຢ່າງຖືກຕ້ອງວ່າ: "ຢ່າໄດ້ສິ້ນເປືອງເງິນອັນເປັນພອນສະຫວັນທີ່ມີຄ່າ ດ້ວຍການ ສະໜອງ 'ຕັນຫາຂອງຕາ,'[9] ການຊື້ເຄື່ອງທີ່ມີລາຄາແພງ ຫຼື ການຊື້ເຄື່ອງປະດັບທີ່ບໍ່ຈຳເປັນ. ຢ່າ ໄດ້ຈ່າຍເງິນໄປເພື່ອປະດັບປະດາບ້ານເຮືອນຂອງທ່ານເພື່ອອວດຄົນອື່ນ ຫຼື ໃນການຊື້ເຄື່ອງເຟີນີເຈີ ທີ່ຫຼູຫຼາລາຄາແພງ, ໃນການຊື້ຮູບພາບລາຄາສູງ ຫຼື ດ້ວຍການປົດທອງໂອບຄຳ; . . . ຢ່າຈ່າຍເງິນ ເພື່ອສະໜອງຄວາມທະນົງຕົນ ຫຼື ເພື່ອເປັນທີ່ນິຍົມຊົມເຊີຍຂອງຄົນອື່ນ. . . . ຕາບໃດທີ່ທ່ານເອົາໃຈໃສ່ ຕົວເອງ ກໍຈະມີຄົນຊົມເຊີຍ; ຕາບໃດທີ່ທ່ານ 'ນຸ່ງຫົ່ມເສື້ອຜ້າສີມ່ວງອ່ອນ ແລະ ຜ້າປ່ານເນື້ອ ລະອຽດ, ປິຕິຍິນດີດ້ວຍອາຫານກິນຢ່າງປານີດທຸກ ໆ ວັນ' (ລູກາ 16:19), ແນ່ນອນກໍຈະມີຫຼາຍຄົນ ສັນລະເສີນລົດສະນິຍົມ, ຄວາມເອື້ອເຟື້ອເຜື່ອແຜ່ ແລະ ການຕ້ອນຮັບຂັບສູ່ຂອງທ່ານ. ແຕ່ຢ່າຊື້ຄຳ ຍ້ອງຍໍຂອງມະນຸດດ້ວຍລາຄາແພງຫຼາຍເຊັ່ນນີ້ເລີຍ. ຈົ່ງພໍໃຈກັບກຽດທີ່ມາຈາກພຣະເຈົ້າ."[10] ຢ່າງໃດ ກໍຕາມ, ມີຫຼາຍຄຣິສຕະຈັກໃນສະໄໝປັດຈຸບັນທີ່ໄດ້ປະຕິເສດຄຳສອນດັ່ງກ່າວ. *{GC 385.2}*

ຊາວໂລກນິຍົມອ້າງວ່າຕົນມີສາສະໜາ. ພວກເຈົ້າໜ້າທີ່, ນັກການເມືອງ, ທະນາຍຄວາມ, ໝໍ ແລະ ພໍ່ຄ້າຊາວຂາຍ ກໍມາເປັນສະມາຊິກຄຣິສຕະຈັກ ເພື່ອຈະໄດ້ເປັນທີ່ນັບໜ້າຖືຕາຂອງຄົນໃນ ສັງຄົມ ແລະ ຈະໄດ້ຮັບຜົນປະໂຫຍດຝ່າຍໂລກ. ດັ່ງນັ້ນ, ພວກເຂົາຈຶ່ງພະຍາຍາມປິດບັງການ ກະທຳທຸກຢ່າງທີ່ບໍ່ຊອບທຳ ດ້ວຍການອ້າງວ່າຕົນເປັນຄຣິສຕຽນ. ເມື່ອຄຣິສຕະຈັກທັງຫຼາຍໄດ້ຮັບ ການອຸດໜູນດ້ວຍຊັບສິນ ແລະ ອິດທິພົນຂອງຊາວໂລກ ທີ່ຮັບບັບຕິສະມາເຂົ້າມາເປັນສະມາຊິກ ເຊັ່ນນີ້, ພວກເຂົາກໍຍິ່ງພະຍາຍາມເຮັດໃຫ້ໂບດເປັນທີ່ນິຍົມຫຼາຍຂຶ້ນກວ່າເກົ່າ. ມີການສ້າງໂບດທີ່ສີ ແຍກຖະໜົນໃຫຍ່ ແລະ ປະດັບປະດາໃນຮູບແບບທີ່ຫຼູຫຼາທີ່ສຸດ. ຜູ້ທີ່ໄປນະມັດສະການ ກໍພາກັນນຸ່ງ ເຄື່ອງທີ່ມີລາຄາແພງຕາມສະໄໝນິຍົມ. ມີການວ່າຈ້າງສາສະໜາຈານທີ່ເກັ່ງກ້າສາມາດດ້ວຍເງິນເດືອນ ສູງ ໆ ເພື່ອໃຫ້ການບັນເທີງ ແລະ ດຶງດູດປະຊາຊົນ. ຄຳເທດສະໜາຂອງອາຈານເຫຼົ່ານີ້ ຈະຕ້ອງບໍ່ ແຕະຕ້ອງຄວາມບາບ ອັນເປັນທີ່ນິຍົມຂອງຄົນໃນສັງຄົມ, ແຕ່ຕ້ອງກ່າວຖ້ອຍຄຳທີ່ສະບາຍຫູສະດວກ

[8] *ອ້າງອີງຈາກທີ່ດຽວກັນ*, ໜ້າ 278.

[9] 1 ໂຢຮັນ 2:16 LCV.

[10] *ງານຂຽນຂອງເວສະລີ* (Wesley), ຄຳເທດສະໜາທີ 50, "ການໃຊ້ເງິນ."

ໃຈ. ດ້ວຍເຫດນີ້, ຄົນບາບທີ່ປະພຶດຕາມສະໄໝນິຍົມ ກຳມາເປັນສະມາຊິກຂອງຄຣິສຕະຈັກ ແລະ ຄວາມ ບາບຕາມສະໄໝນິຍົມ ກໍຖືກບົດບັງພາຍໃຕ້ຄາບຂອງທຳມະ. {GC 386.1}

ມີວາລະສານຝ່າຍໂລກສະບັບໜຶ່ງ ກ່າວເຖິງທ່າທີຂອງຄຣິສຕຸງນໃນປັດຈຸບັນທີ່ມີຕໍ່ໂລກວ່າ: “ຄຣິສ-ຕະຈັກໄດ້ຍອມຕໍ່ສະໄໝນິຍົມ ແລະ ປັບປຸງນຮູບແບບການນະມັດສະການ ໃຫ້ເປັນໄປຕາມຄວາມ ຕ້ອງການຂອງຄົນໃນຍຸກປັດຈຸບັນ.” “ແທ້ຈິງແລ້ວ, ຄຣິສຕະຈັກໃນທຸກມື້ນີ້ເຮັດທຸກສິ່ງທຸກຢ່າງທີ່ສາມາດ ເຮັດໄດ້ເພື່ອດຶງດູດສະມາຊິກ.” ມີນັກຂຽນຄົນໜຶ່ງໃນໜັງສືພິມ *ນິວຢອກອິນດີເພັນເດັນ* (New York Independent) ກ່າວເຖິງສະພາບຂອງຄຣິສຕະຈັກຄະນະເມທໍດິສໃນຂະນະນັ້ນວ່າ: “ເສັ້ນດຳທີ່ແບ່ງແຍກ ລະຫວ່າງຄົນທີ່ນັບຖືພຣະເຈົ້າ ແລະ ຄົນທີ່ບໍ່ມີສາສະໜາໄດ້ກາຍເປັນສີເທົາ; ມີຜູ້ກະຕືລືລົ້ນທັງສອງ ຝ່າຍທີ່ພະຍາຍາມທຳລາຍຄວາມແຕກຕ່າງທັງໝົດລະຫວ່າງວິຖີຊີວິດ ແລະ ການນິຍົມຊົມຊອບຂອງ ພວກເຂົາ.” “ຄວາມນິຍົມຂອງສາສະໜາ ເຮັດໃຫ້ມີຄົນເຂົ້າມາຫຼາຍຂຶ້ນເພື່ອສະແຫວງຫາຜົນປະໂຫຍດ ໂດຍບໍ່ສົນໃຈຕໍ່ຄຳສອນຂອງສາສະໜາດັ່ງກ່າວ.” {GC 386.2}

ທ່ານ ຮາວອາດ ໂກຣສະບີ ກ່າວວ່າ: “ມັນເປັນເລື່ອງທີ່ໜ້າເປັນຫ່ວງຫຼາຍ ທີ່ເຫັນຄຣິສຕະຈັກ ບໍ່ຄ່ອຍເຮັດໃຫ້ພຣະປະສົງຂອງພຣະຄຣິສສຳເລັດ. ຊາວຢິວໃນສະໄໝບູຮານ ຍອມໃຫ້ການພົວພັນ ກັບຊົນຊາດທີ່ຂາບໄຫວ້ຮູບເຄົາລົບ ນຳພາຈິດໃຈຂອງພວກເຂົາໄປຈາກພຣະເຈົ້າ; . . . ຄຣິສຕະຈັກຂອງ ພຣະເຢຊູໃນເວລານີ້ກໍເປັນດັ່ງນັ້ນ: ໂດຍການເຂົ້າໄປມີຫຸ້ນສ່ວນກັບຄົນທີ່ບໍ່ເຊື່ອ; ໂດຍການປະຖິ້ມວິທີການ ຂອງພຣະເຈົ້າເຊິ່ງໃຫ້ຊີວິດ ແລະ ປ່ອຍຕົວໄປຕາມນິໄສຂອງສັງຄົມທີ່ບໍ່ມີພຣະຄຣິສ. ເຖິງແມ່ນວ່າ ນິໄສ ບາງຢ່າງເຫຼົ່ານັ້ນເບິ່ງຄືວ່າໜ້າຈະໃຫ້ຜົນດີ ແຕ່ມັນເປັນນິໄສທີ່ອັນຕະລາຍ. ຄຣິສຕະຈັກໃນສະໄໝນີ້ຍັງ ເຮັດຕາມແບບຢ່າງຂອງຊາວຢິວ ໂດຍການນຳໃຊ້ເຫດຜົນທີ່ຂັດຕໍ່ສິ່ງທີ່ພຣະເຈົ້າຊົງເປີດເຜີຍຜ່ານພຣະຄຳ ຂອງພຣະອົງ, ເຊິ່ງສິ່ງເຫຼົ່ານີ້ກົງກັນຂ້າມກັບສິ່ງທີ່ຈະອຳນວຍຕໍ່ການເຕີບໂຕໃນພຣະຄຸນ.”[11] {GC 387.1}

ກະແສແຫ່ງການສະແຫວງຫາຝ່າຍໂລກ ແລະ ຂອງບັນເທີງທີ່ຫຼັ່ງໄຫຼເຂົ້າມານີ້ ໄດ້ເຮັດໃຫ້ການ ເສຍສະຫຼະ ແລະ ການປະຕິເສດຕົນເອງເພື່ອເຫັນແກ່ພຣະຄຣິສເກືອບຈະບໍ່ເຫຼືອແລ້ວ. “ບັດນີ້, ຊາຍ ຍິງບາງຄົນທີ່ເຂັ້ມແຂງຢູ່ໃນຄຣິສຕະຈັກຂອງເຮົາ ໄດ້ຮັບການສັ່ງສອນເມື່ອຍັງເປັນເດັກນ້ອຍວ່າ ຈະຕ້ອງ ຮູ້ຈັກເສຍສະຫຼະເພື່ອຈະມີສິ່ງຖວາຍແດ່ພຣະຄຣິສ ຫຼື ເພື່ອຈະໄດ້ເຮັດບາງສິ່ງເພື່ອພຣະອົງ.” ແຕ່ວ່າ ໃນປັດຈຸບັນ “ຖ້າຂາດງົບປະມານ . . . ຢ່າໄດ້ຮຽກຮ້ອງໃຫ້ມີການບໍລິຈາກ. ຢ່າເລີຍ! ແຕ່ໃຫ້ຈັດງານ ບຸນ ຫຼື ສະແດງພາບສິລະປະ ຫຼື ຫຼິ້ນລະຄອນຈຳລອງການຂຶ້ນສານ ຫຼື ຈັດງານລ້ຽງ; ຄືຂໍໃຫ້ມີ ອາຫານ ແລະ ມີສິ່ງບັນເທີງກໍພໍ.” {GC 387.2}

ທ່ານ ວາສະເບີນ (Washburn) ຜູ້ດຳລົງຕຳແໜ່ງຜູ້ວ່າການລັດວິສະຄອນຊິນ (Wisconsin) ໄດ້ ກ່າວໃນຄຳປາໄສປະຈຳປີ ໃນວັນທີ 9 ມັງກອນ 1873 ວ່າ: “ຄົງຕ້ອງມີການອອກກົດໝາຍ ເພື່ອສະຫຼາຍ ບ່ອນເພາະລ້ຽງນັກຫຼິ້ນການພະນັນ. ສະຖານທີ່ຜະລິດຄົນຫຼິ້ນການພະນັນມີຢູ່ທຸກຫົນທຸກແຫ່ງ. ບາງຄັ້ງ ແມ່ນແຕ່ຄຣິສຕະຈັກກໍຍັງເຮັດວຸງກຂອງມານຊາຕານ, ແຕ່ຄົງບໍ່ໄດ້ຕັ້ງໃຈ. ມີວິທີການຫຼາຍຢ່າງເພື່ອຫາ ເງິນທາງລັດເຊັ່ນ ການຈັດຄອນເສີດ ຫຼື ງານອື່ນໆ ເພື່ອການກຸສົນ, ການຈ້ຳສະຫຼາກໂດຍມີລາງວັນ ເປັນສິນຄ້າ ຫຼື ເງິນ (ເຊິ່ງບາງຄັ້ງການຈ້ຳສະຫຼາກນັ້ນ ກໍເພື່ອຫາເງິນໃຫ້ຄຣິສຕະຈັກ ຫຼື ການກຸສົນ ອື່ນໆ, ແຕ່ຫຼາຍຄັ້ງກໍເພື່ອຈຸດປະສົງທີ່ບໍ່ຄ່ອຍສຳຄັນ) ແລະ ວິທີອື່ນໆ ໃນທຳນອງດຽວກັນ; ທັງໝົດ ນີ້ກໍເພື່ອຫາເງິນໂດຍບໍ່ຕ້ອງທົດແທນດ້ວຍສິ່ງທີ່ມີຄ່າ. ບໍ່ມີສິ່ງໃດທີ່ເຮັດໃຫ້ເສື່ອມເສຍ ຫຼື ມົວເມົາ ໂດຍສະເພາະຕໍ່ຊາວໜຸ່ມເທົ່າກັບການໄດ້ເງິນໂດຍບໍ່ຕ້ອງອອກແຮງງານ. ຄົນທີ່ສັງຄົມໃຫ້ຄວາມເຄົາລົບ

[11] ໜັງສື *ຄຣິສຕຸງນທີ່ມີສຸຂະພາບດີ* (The Healthy Christian), ຫົວຂໍ້: *ຄຳວິງວອນຕໍ່ຄຣິສຕະຈັກ*, ໜ້າ 141, 142 ສະບັບ 1871.

ນັບຖືຈັດການສ່ຽງໂຊກດັ່ງກ່າວ ໂດຍໃຫ້ຄວາມເຫັນວ່າ, ບໍ່ເປັນຫຍັງ, ເພາະເງິນທີ່ໄດ້ຮັບນັ້ນຈະຖືກນຳໄປໃຊ້ໃນການກຸສົນ. ດັ່ງນັ້ນ, ຈຶ່ງບໍ່ໜ້າແປກໃຈທີ່ຊາວໜຸ່ມຂອງລັດມິນິໂຊມັກຫຼິ້ນການພະນັນ ເພາະມີການຈັດງານສ່ຽງໂຊກຢູ່ທົ່ວໄປ." *{GC 387.3}*

ການປັບຕົວໃຫ້ເຂົ້າກັບຊາວໂລກກຳລັງລະບາດຢູ່ໃນຄຣິສຕະຈັກທັງຫຼາຍໃນປະເທດທີ່ຄົນສ່ວນໃຫຍ່ເປັນຄຣິສຕຽນ. ອາຈານ ໂຣເບີດ ແອັດຄິນສ໌ (Robert Atkins) ໄດ້ເທດສະໜາໃນນະຄອນ ລອນດອນ ເຖິງຄວາມເສື່ອມຖອຍຝ່າຍຈິດວິນຍານທີ່ມີຢູ່ທົ່ວໄປໃນປະເທດອັງກິດວ່າ: "ຄົນຊອບທຳທີ່ແທ້ຈິງໄດ້ຫຼຸດຈຳນວນໜ້ອຍລົງ ແລະ ບໍ່ມີຜູ້ໃດເອົາໃຈໃສ່. ທຸກມື້ນີ້ມີຄົນທີ່ອ້າງເລື່ອງທຳມະໃນຄຣິສຕະຈັກ ແຕ່ກັບນິຍົມຝ່າຍໂລກ, ຄືເປັນຜູ້ປະຕິບັດຕາມແບບຢ່າງຂອງໂລກ, ເປັນຄົນຮັກຄວາມສະດວກສະບາຍ ແລະ ໃຝ່ຫາການເປັນທີ່ນັບໜ້າຖືຕາຂອງຄົນອື່ນ. ພວກເຂົາຖືກຮຽກເອີ້ນໃຫ້ທົນທຸກກັບພຣະຄຣິສ, ແຕ່ບໍ່ຍອມແມ່ນແຕ່ຈະຖືກຕິຕຽນເພື່ອພຣະອົງ. . . . ຄຳວ່າ *ຫຼົງຈາກຄວາມເຊື່ອ, ຫຼົງຈາກຄວາມເຊື່ອ, ຫຼົງຈາກຄວາມເຊື່ອ,* ຖືກຂຽນໄວ້ໜ້າໂບດທຸກແຫ່ງ. ຖ້າສະມາຊິກຮູ້ສຶກຕົວ ແລະ ສຳນຶກຂຶ້ນມາ ກໍຍັງຈະມີຄວາມຫວັງຢູ່ໄດ້, ແຕ່ເປັນເລື່ອງທີ່ໜ້າເສົ້າໃຈຫຼາຍ ຍ້ອນພວກສະມາຊິກກ່າວວ່າ, 'ຂ້ອຍຮັ່ງມີເປັນດີແລ້ວ ຂ້ອຍບໍ່ຕ້ອງການສິ່ງໃດ ໆ ອີກ.'" (ພຣະນິມິດ 3:17).[12] *{GC 388.1}*

ຄວາມບາບຂອງບາບີໂລນ

ຄວາມບາບອັນໃຫຍ່ຫຼວງທີ່ບາບີໂລນຖືກກ່າວຫານັ້ນຄື ມັນ "ເຮັດໃຫ້ປະຊາຊາດທັງປວງ ດື່ມເຫຼົ້າແວງປຸກຢ່າງເຫຼືອເກີນຂອງຕົນ ຕາມຄວາມປາຖະໜາທາງກາມ." (ພຣະນິມິດ 14:8). ຈອກທີ່ນາງໃຫ້ຊາວໂລກດື່ມນັ້ນ ໝາຍເຖິງຄຳສອນອັນເປັນຄວາມເທັດ ທີ່ນາງໄດ້ຮັບເອົາຍ້ອນການພົວພັນຢ່າງຜິດສິນທຳກັບບັນດາຜູ້ມີອຳນາດໃນໂລກ. ການເປັນມິດກັບໂລກເຮັດໃຫ້ຄວາມເຊື່ອຂອງນາງເສື່ອມລົງ, ແລ້ວນາງຈຶ່ງໂນ້ມນ້າວຊາວໂລກໃຫ້ເສື່ອມລົງ ດ້ວຍຄຳສອນຕ່າງ ໆ ທີ່ຂັດແຍ້ງກັບຂໍ້ພຣະຄຳພີທີ່ແຈ່ມແຈ້ງທີ່ສຸດ. *{GC 388.2}*

ຄຣິສຕະຈັກໂຣມໄດ້ປິດກັ້ນປະຊາຊົນບໍ່ໃຫ້ເຂົ້າເຖິງພຣະຄຳພີ ແລະ ບັງຄັບຜູ້ຄົນໃຫ້ຍອມຮັບຄຳສອນຂອງໂຣມແທນພຣະຄຳຂອງພຣະເຈົ້າ. ພາລະກິດຂອງການປະຕິຮູບສາສະໜາໃນສະຕະວັດທີ 16 ແມ່ນການຄືນພຣະຄຳພີໃຫ້ປະຊາຊົນ; ແຕ່ສະມາຊິກຄຣິສຕະຈັກທັງຫຼາຍໃນທຸກມື້ນີ້ ຖືກສອນໃຫ້ເຊື່ອວາງໃຈໃນຫຼັກຂໍ້ເຊື່ອ ແລະ ຄຳສອນຂອງຄຣິສຕະຈັກ ແທນທີ່ຈະເຊື່ອໃນພຣະຄຳພີ. ທ່ານ ຊານສ໌ ບີເຊີ (Charles Beecher) ກ່າວເຖິງຄຣິສຕະຈັກຝ່າຍໂປຣແຕັສຕັງວ່າ: "ພວກເຂົາຮັບບໍ່ໄດ້ ເມື່ອມີຄົນຄັດຄ້ານຫຼັກຂໍ້ເຊື່ອ ເໝືອນກັບພວກນັກຂຽນຄຣິສຕຽນໃນສະໄໝບູຮານ ທີ່ຄົງຈະຮັບບໍ່ໄດ້ຄືກັນ ຫາກມີຄົນຕຳໜິການເຄົາລົບນັບຖືພວກນັກບຸນ ແລະ ຄົນທີ່ຖືກຂ້າຍ້ອນຄວາມເຊື່ອ ທີ່ຕົນເອງກຳລັງສົ່ງເສີມຢູ່ນັ້ນ. . . . ຄະນະຕ່າງ ໆ ຂອງນິກາຍໂປຣແຕັສຕັງໄດ້ມັດມືເຊິ່ງກັນແລະກັນ ຈົນເຖິງຂັ້ນທີ່ວ່າ ຖ້າຊາຍຄົນໃດຈະເປັນສາສະໜາຈານ ກໍບໍ່ສາມາດເປັນໄດ້ ນອກຈາກຈະຮັບເອົາໜັງສືອື່ນທີ່ນອກເໜືອຈາກພຣະຄຳພີ. . . . ບໍ່ໄດ້ຄິດໄປເອງເມື່ອກ່າວວ່າ ພວກທີ່ນິຍົມຫຼັກຂໍ້ເຊື່ອໃນປັດຈຸບັນ ເລີ່ມຫ້າມບໍ່ໃຫ້ຄົນອ່ານພຣະຄຳພີ ເໝືອນທີ່ຄຣິສຕະຈັກໂຣມເຄີຍເຮັດມາ, ແຕ່ພວກເຂົາຫ້າມດ້ວຍວິທີທີ່ແນບນຽນກວ່າວິທີຂອງຄຣິສຕະຈັກໂຣມໃນອະດີດ."[13] *{GC 388.3}*

---

[12] Second Advent Library, ໃບປິວສະບັບທີ 39.

[13] ບົດເທດສະໜາເລື່ອງ: "ພຣະຄຳພີເປັນຫຼັກຂໍ້ເຊື່ອທີ່ພຽງພໍ," ເທດທີ່ເມືອງຟັອດເວນ, ລັດອິນດີແອນາ, ວັນທີ 22 ກຸມພາ 1846.

ເມື່ອໃດກໍຕາມ ທີ່ມີຜູ້ສອນພຣະຄຳຂອງພຣະເຈົ້າຢ່າງສັດຊື່ ກໍຈະມີສາສະໜາຈານຜູ້ຮຽນສູງ ແລະ ຜູ້ອ້າງວ່າຕົນເຂົ້າໃຈພຣະຄຳພີເປັນຢ່າງດີ ອອກມາກ່າວຫາຄຳສອນອັນມີຫຼັກວ່າເປັນຄຳສອນນອກຮີດ; ແລະດ້ວຍເຫດນີ້, ຈະຫັນຄົນທີ່ກຳລັງສະແຫວງຫາຄວາມຈິງໄປໃນທາງອື່ນ. ໂລກກຳລັງມຶນເມົາດ້ວຍຄຳສອນອັນເປັນເທັດຂອງບາບີໂລນ ຈົນໂງ່ຫົວບໍ່ຂຶ້ນ, ບໍ່ຢ່າງນັ້ນຄົນທັ້ງຫຼາຍຄົງຍອມຮັບ ແລະ ກັບໃຈເຊື່ອຄວາມຈິງອັນຈະແຈ້ງ ແລະ ກົງໄປກົງມາຈາກພຣະຄຳຂອງພຣະເຈົ້າ. ແຕ່ຄຳສອນທາງສາສະໜາສັບສົນ ແລະ ຂັດແຍ້ງກັນຫຼາຍ ຈົນຄົນທົ່ວໄປບໍ່ຮູ້ວ່າຄວາມຈິງແມ່ນຫຍັງ. ຄຣິສຕະຈັກທັງຫຼາຍຕ້ອງຮັບຜິດຊອບຕໍ່ຄວາມບາບທີ່ຊາວໂລກບໍ່ຍອມເຊື່ອພຣະເຈົ້າ. *{GC 389.1}*

ຂ່າວຂອງທູດສະຫວັນອົງທີສອງຂອງພຣະນິມິດບົດທີ 14 ໄດ້ຖືກປະກາດເປັນຄັ້ງທຳອິດໃນລະດູຮ້ອນຂອງປີ 1844. ໃນເວລານັ້ນ, ຂ່າວສານດັ່ງກ່າວມີຄວາມໝາຍສະເພາະເຖິງບັນດາຄຣິສຕະຈັກໃນສະຫະລັດອາເມຣິກາ ເຊິ່ງເປັນສະຖານທີ່ທີ່ໄດ້ຮັບການເຕືອນເລື່ອງການພິພາກສາຫຼາຍທີ່ສຸດ ແລະ ເປັນບ່ອນທີ່ປະຕິເສດຄຳເຕືອນດັ່ງກ່າວຫຼາຍທີ່ສຸດເຊັ່ນກັນ; ນອກຈາກນັ້ນ, ຄຣິສຕະຈັກໃນອາເມຣິກາກໍເສື່ອມເສຍໄວກວ່າບ່ອນອື່ນ. ເຖິງຢ່າງໃດກໍຕາມ, ຂ່າວຂອງທູດສະຫວັນອົງທີສອງນັ້ນ ບໍ່ໄດ້ສຳເລັດທັງໝົດໃນປີ 1844. ພວກຄຣິສຕະຈັກໄດ້ເສື່ອມຖອຍທາງສິນທຳໃນປີດັ່ງກ່າວ ຍ້ອນພວກເຂົາບໍ່ຮັບເອົາຄຳສອນເລື່ອງການສະເດັດກັບມາຂອງພຣະຄຣິສ; ແຕ່ການເສື່ອມນັ້ນບໍ່ເຖິງຂັ້ນສົມບູນ. ໃນຂະນະທີ່ປະຕິເສດຄວາມຈິງທີ່ມີຄວາມໝາຍພິເສດສຳລັບຍຸກສະໄໝນີ້ຢ່າງຕໍ່ເນື່ອງ ພວກເຂົາກໍຕົກຕ່ຳລົງເລື້ອຍໆ. ຢ່າງໃດກໍຕາມ, ຍັງບໍ່ສາມາດກ່າວໄດ້ວ່າ "ບາບີໂລນມະຫານະຄອນຫຼົ້ມຈົມເສຍແລ້ວ . . .[ຍ້ອນມັນ] ເຮັດໃຫ້ *ປະຊາຊາດທັງປວງ* ດື່ມເຫຼົ້າແວງປຸກຢ່າງເຫຼືອເກີນຂອງຕົນ ຕາມຄວາມປາຖະໜາທາງກາມ." (ພຣະນິມິດ 14:8). ບາບີໂລນຍັງບໍ່ທັນໄດ້ບັງຄັບໃຫ້ປະຊາຊາດທັງປວງດື່ມເທື່ອ. ໃນປະເທດທັງຫຼາຍທີ່ຄົນສ່ວນໃຫຍ່ນັບຖືສາສະໜາຄຣິສ ມີການນິຍົມຝ່າຍໂລກເພີ່ມຂຶ້ນໃນຄຣິສຕະຈັກຝ່າຍໂປຣແຕັສຕັງ; ສະມາຊິກຂອງຄຣິສຕະຈັກເຫຼົ່ານັ້ນ ບໍ່ສົນໃຈໃນຄວາມຈິງທີ່ທົດສອບຜູ້ຄົນໃນສະໄໝຂອງເຮົາ. ຂ່າວຂອງທູດສະຫວັນອົງທີສອງໄດ້ປະນາມຄຣິສຕະຈັກເຫຼົ່ານີ້ດ້ວຍ. ແຕ່ການຫຼົ້ງຈາກຄວາມເຊື່ອຍັງບໍ່ເຖິງຂັ້ນສູງສຸດ. *{GC 389.2}*

ພຣະຄຳພີກ່າວວ່າ ກ່ອນການສະເດັດມາຂອງພຣະຄຣິສ, ຊາຕານຈະ "ສະແດງອຳນາດ*ທຸກຮູບແບບ*ຜ່ານທາງໝາຍສຳຄັນ ແລະ ການອັດສະຈັນ ເຊິ່ງລ້ວນແຕ່ຮັບໃຊ້ຄວາມຕົວະ ແລະ ໃຊ້ຄວາມຊົ່ວຮ້າຍທຸກຢ່າງຫຼອກລວງ;" ສ່ວນຄົນທັງຫຼາຍທີ່ "ປະຕິເສດທີ່ຈະຮັກຄວາມຈິງທີ່ນຳໄປສູ່ຄວາມພົ້ນ," ຈະຖືກປະໄວ້ໃຫ້ຖືກຫຼອກລວງ "ເພື່ອວ່າພວກເຂົາຈະເຊື່ອຄວາມຕົວະ." (2 ເທສະໂລນິກ 2:9–11 LCV). ການຫຼົ້ມຈົມຂອງບາບີໂລນຈະບໍ່ສົມບູນ ຈົນສະພາບດັ່ງກ່າວເກີດຂຶ້ນ ແລະ ຄຣິສຕະຈັກທັງຫຼາຍໃນປະເທດທີ່ຄົນສ່ວນໃຫຍ່ເປັນຄຣິສຕຽນ ມີຄວາມສຳພັນກັບໂລກຢ່າງສົມບູນ. ການປ່ຽນແປງນັ້ນຈະເກີດຂຶ້ນເປັນຂັ້ນເປັນຕອນຢ່າງຕໍ່ເນື່ອງ; ສະນັ້ນ, ຄວາມສຳເລັດຢ່າງສົມບູນຂອງພຣະນິມິດບົດທີ 14:8 ຍັງເປັນເລື່ອງຂອງອະນາຄົດຢູ່. *{GC 389.3}*

ເຖິງແມ່ນວ່າ ຄຣິສຕະຈັກທັງຫຼາຍທີ່ເປັນອົງປະກອບຂອງບາບີໂລນ ຢູ່ໃນສະພາບທີ່ມືດມົນຝ່າຍຈິດວິນຍານ ແລະ ຫ່າງເຫີນຈາກພຣະເຈົ້າ, ແຕ່ຄຣິສຕຽນທີ່ແທ້ຈິງສ່ວນໃຫຍ່ ຍັງຄົງຢູ່ໃນຄຣິສຕະຈັກເຫຼົ່ານັ້ນ. ມີຫຼາຍຄົນທີ່ຍັງບໍ່ເຄີຍຮັບຮູ້ເຖິງຄວາມຈິງພິເສດສຳລັບຍຸກສະໄໝນີ້. ມີຫຼາຍຄົນທີ່ບໍ່ພໍໃຈກັບສະພາບຂອງຕົນໃນປັດຈຸບັນ ແລະ ປາຖະໜາທີ່ຈະເຂົ້າໃຈຄວາມຈິງຫຼາຍຂຶ້ນ. ພວກເຂົາຊອກຫາລັກສະນະຂອງພຣະຄຣິສຢູ່ໃນຄຣິສຕະຈັກຂອງຕົນແຕ່ບໍ່ເຫັນ. ເມື່ອບັນດາຄຣິສຕະຈັກດັ່ງກ່າວ ຕິຕົວອອກຫ່າງຈາກຄວາມຈິງໄປເລື້ອຍໆ ແລະ ໄປຜູກພັນກັບຝ່າຍໂລກຫຼາຍຂຶ້ນ, ຄວາມແຕກຕ່າງລະຫວ່າງສອງກຸ່ມຈະຂະຫຍາຍອອກກວ້າງ ແລະ ໃນທີ່ສຸດກໍຈະຕ້ອງແຍກຈາກກັນ. ເວລາຈະມາເຖິງ ເມື່ອຜູ້ທີ່

ຮັກພຣະເຈົ້າຢ່າງສຸດຈິດສຸດໃຈ ຈະບໍ່ສາມາດຢູ່ໃນກຸ່ມຄົນທີ່ຄົນສ່ວນໃຫຍ່ “ຮັກຄວາມສະໜຸກຫຼາຍກວ່າ ຮັກພຣະເຈົ້າ” ໄດ້, ຄືຄົນທີ່ “ເຮັດເໝືອນຄົນນັບຖືພຣະເຈົ້າຢ່າງຖືກຕ້ອງ, ແຕ່ວ່າຣິດອຳນາດຂອງການ ນັບຖືນັ້ນ ເຂົາກໍປະຕິເສດເສຍ.” (2 ຕີໂມທຽວ 3:4–5 LO1972). *{GC 390.1}*

ພຣະນິມິດບົດທີ 18 ກ່າວເຖິງເວລາໜຶ່ງເມື່ອຄຣິສຕະຈັກທັງຫຼາຍໄດ້ປະຕິເສດຄຳເຕືອນທັງສາມ ຂອງພຣະນິມິດ 14:6–12. ໃນຄາວນັ້ນ, ສະພາບຂອງຄຣິສຕະຈັກເຫຼົ່ານັ້ນຈະເປັນໄປຕາມຖ້ອຍຄຳຂອງ ທູດສະຫວັນອົງທີສອງຢ່າງສົມບູນ ແລະ ຄົນຂອງພຣະເຈົ້າທີ່ຍັງຢູ່ໃນບາບີໂລນຈະຖືກຮຽກເອີ້ນໃຫ້ແຍກ ຕົວອອກຈາກບາບີໂລນ. ຄຳເຕືອນນີ້ເປັນຂ່າວສານອັນສຸດທ້າຍທີ່ຈະປະກາດໃຫ້ແກ່ໂລກ ແລະ ມັນ ຈະບັນລຸຜົນຂອງມັນຈົນສຳເລັດ. ເມື່ອນັ້ນທຸກຄົນທີ່ “ບໍ່ໄດ້ເຊື່ອຄວາມຈິງ ຄືຜູ້ທີ່ເພີດເພີນຢູ່ໃນການ ຊົ່ວຮ້າຍ” (2 ເທສະໂລນີກ 2:12) ຈະຖືກປະໄວ້ໃຫ້ຖືກຫຼອກລວງຢ່າງຮ້າຍແຮງເພື່ອຈະເຊື່ອຄວາມບໍ່ ຈິງ. ໃນຄາວນັ້ນ, ແສງແຫ່ງຄວາມຈິງຈະສ່ອງມາຍັງທຸກຄົນທີ່ເປີດໃຈຕ້ອນຮັບຄວາມຈິງ ແລະ ລູກຂອງ ພຣະເຈົ້າທຸກຄົນທີ່ຍັງຄ້າງຢູ່ໃນບາບີໂລນຈະຕອບຮັບຕໍ່ຄຳຮຽກເອີ້ນທີ່ກ່າວວ່າ: “ໄພ່ພົນຂອງເຮົາເອີຍ, ຈົ່ງ ອອກມາຈາກມະຫານະຄອນນັ້ນເສຍ.” (ພຣະນິມິດ 18:4). *{GC 390.2}*

“ຂະນະທີ່ເຈົ້າບ່າວຍັງບໍ່ມາ, ພວກຍິງສາວທັງໝົດຕ່າງກໍເຫງົານອນ ແລະ ຫຼັບໄປ. ພໍ ເຖິງທ່ຽງຄືນກໍມີສຽງຮ້ອງດັງຂຶ້ນວ່າ, ‘ເຈົ້າບ່າວມາແລ້ວ ຈົ່ງອອກໄປຮັບເພື່ນເຖີດ.’ ຍິງ ສາວທຸກຄົນຈຶ່ງລຸກຂຶ້ນ ແລະ ຈັດຕຽມໂຄມໄຟຂອງຕົນ.” (ມັດທາຍ 25:5–7).

ເບິ່ງໜ້າ 320.

Image generated with AI (Google Gemini).

22

ຄຳພະຍາກອນສຳເລັດ

ພຣະຄຳທີ່ໜູນໃຈ

ເມື່ອເວລາທີ່ກຸ່ມແອັດເວັນຕິສຄາດການໃນເບື້ອງຕົ້ນວ່າ ພຣະຜູ້ເປັນເຈົ້າຈະສະເດັດມານັ້ນໄດ້ຜ່ານພົ້ນໄປ ຄືລະດູໃບໄມ້ປົ່ງຂອງປີ 1844, ຜູ້ທີ່ເຝົ້າລໍຄອຍການສະເດັດມາຂອງພຣະອົງດ້ວຍຄວາມເຊື່ອຈຶ່ງຮູ້ສຶກສັບສົນ ແລະ ຕົກຢູ່ໃນຄວາມສົງໄສໄປໄລຍະໜຶ່ງ. ໃນຂະນະທີ່ຊາວໂລກເຫັນວ່າ ພວກເຂົາພ່າຍແພ້ຢ່າງໝົດສິ້ນ ແລະ ຫຼົງເຊື່ອໃນສິ່ງທີ່ບໍ່ຈິງ, ແຫຼ່ງປອບໂຍນຂອງພວກເຂົາຍັງຄົງເປັນພຣະຄຳຂອງພຣະເຈົ້າ. ຫຼາຍຄົນຍັງສືບຕໍ່ຄົ້ນຄວ້າພຣະຄຳພີ, ພິຈາລະນາຫຼັກຖານແຫ່ງຄວາມເຊື່ອຂອງພວກເຂົາຄືນໃໝ່ ແລະ ສຶກສາຄຳທຳນວາຍຢ່າງລະມັດລະວັງ ເພາະຕ້ອງການຄວາມກະຈ່າງເພີ່ມເຕີມ. ຫຼັກຖານໃນພຣະຄຳພີທີ່ສະໜັບສະໜູນຈຸດຢືນຂອງພວກເຂົາເບິ່ງຄືວ່າຊັດເຈນ ແລະ ມີຄວາມໜັກແໜ້ນ. ມີໝາຍສຳຄັນຫຼາຍຢ່າງທີ່ບໍ່ສາມາດປະຕິເສດໄດ້ວ່າ ການສະເດັດມາຂອງພຣະຄຣິສນັ້ນໃກ້ເຂົ້າມາແລ້ວ. ພຣະພອນພິເສດຈາກພຣະຜູ້ເປັນເຈົ້າ, ທັງໃນການກັບໃຈຂອງຄົນບາບ ແລະ ການຟື້ນຟູຊີວິດຝ່າຍຈິດວິນຍານທ່າມກາງຄຣິສຕຽນທັງຫຼາຍນັ້ນ ເປັນຫຼັກຖານວ່າຂ່າວສານນີ້ມາຈາກສະຫວັນ. ເຖິງແມ່ນວ່າ ຜູ້ທີ່ເຊື່ອບໍ່ສາມາດອະທິບາຍຄວາມຜິດຫວັງຂອງພວກເຂົາໄດ້, ແຕ່ກໍໝັ້ນໃຈວ່າ ພຣະເຈົ້າໄດ້ນຳພາພວກເຂົາໃນປະສົບການທີ່ຜ່ານມາ. *{GC 391.1}*

ໃນຄຳພະຍາກອນທີ່ພວກເຂົາເຊື່ອວ່າເປັນການກ່າວເຖິງເວລາຂອງການສະເດັດມາຄັ້ງທີສອງຂອງພຣະຄຣິສ, ມີຄຳສອນ ແລະ ການໜູນໃຈທີ່ແທດເໝາະກັບຄວາມສັບສົນຂອງພວກເຂົາ. ກຸ່ມຜູ້ເຊື່ອເລື່ອງການສະເດັດມານັ້ນ ຈຶ່ງໄດ້ຮັບກຳລັງໃຈໃຫ້ອົດທົນລໍຖ້າດ້ວຍຄວາມເຊື່ອວ່າ ສິ່ງທີ່ຍັງມືດມົນໃນຂະນະນັ້ນ ຈະໄດ້ຮັບການຊີ້ແຈງເມື່ອເຖິງເວລາ. *{GC 391.2}*

ໜຶ່ງໃນຄຳພະຍາກອນເຫຼົ່ານັ້ນແມ່ນຢູ່ໃນພຣະທຳຮາບາກຸກ 2:1–4 ທີ່ກ່າວວ່າ: “ຂ້າພະເຈົ້າຈະຢືນເຝົ້າຢູ່; ຂ້າພະເຈົ້າຈະຢືນທີ່ຫໍຄອຍ ແລະ ເບິ່ງອອກໄປເພື່ອຈະຟັງເບິ່ງວ່າ ພຣະອົງຈະຊົງກ່າວອັນໃດແກ່ຂ້າພະເຈົ້າ ແລະ ຂ້າພະເຈົ້າຈະທູນຕອບພຣະອົງຢ່າງໃດ ເມື່ອຂ້າພະເຈົ້າຖືກຕຳໜິ; ແລະ ພຣະເຢໂຮວາຊົງຕອບຂ້າພະເຈົ້າວ່າ, ‘ຈົ່ງຂຽນນິມິດນັ້ນລົງໄປ, ຈົ່ງຂຽນໄວ້ເທິງແຜ່ນປ້າຍໃຫ້ກະຈ່າງ ເພື່ອຄົນທີ່ແລ່ນຈະອ່ານໄດ້ຄ່ອງ; ເພາະວ່ານິມິດນັ້ນຍັງລໍຖ້າເວລາທີ່ກຳນົດໄວ້, ແຕ່ໃນທີ່ສຸດມັນກໍຈະກ່າວອອກມາ. ມັນບໍ່ຕົວະ, ຖ້າເບິ່ງຄືຊັກຊ້າ ກໍຈົ່ງຄອຍຖ້າຈັກໜ້ອຍ, ມັນຈະບັງເກີດຂຶ້ນແນ່ນອນ, ຄົງບໍ່ຊັກຊ້າເກີນໄປ. ເບິ່ງແມ, ຜູ້ທີ່ຈິດໃຈຜະຫຍອງຂຶ້ນກໍບໍ່ທ່ຽງທຳ ແຕ່ຄົນຊອບທຳຈະມີຊີວິດດຳລົງຢູ່ໂດຍຄວາມເຊື່ອ.’” (ດັດແປງຈາກສະບັບ TKJV). *{GC 392.1}*

ໃນປີ 1842, ເມື່ອ ຊາມສ໌ ຟິດ ໄດ້ອ່ານຂໍ້ຄວາມທີ່ວ່າ “ຈົ່ງຂຽນນິມິດນັ້ນລົງໄປ, ຈົ່ງຂຽນໄວ້ເທິງແຜ່ນປ້າຍໃຫ້ກະຈ່າງ ເພື່ອຄົນທີ່ແລ່ນຈະອ່ານໄດ້ຄ່ອງ,” ເພິ່ນຮູ້ສຶກວ່າຄວນເຮັດແຜ່ນປ້າຍ ເພື່ອສະແດງໃຫ້ເຫັນພາບເລື່ອງຄຳພະຍາກອນໃນພຣະທຳດານີເອນ ແລະ ພຣະນິມິດ. ກຸ່ມຄົນທີ່ເຊື່ອເລື່ອງ

ການສະເດັດມານັ້ນເຫັນວ່າ ການຕີພິມແຜ່ນປ້າຍດັ່ງກ່າວ ເປັນການສຳເລັດຕາມຄຳສັ່ງທີ່ຂຽນໄວ້ໃນ ພຣະທຳຮາບາກຸກ. ເຖິງຢ່າງໃດກໍຕາມ, ໃນເວລານັ້ນ ບໍ່ມີໃຜສັງເກດເຫັນວ່າ ຄຳພະຍາກອນຂອງ ຮາບາກຸກໄດ້ກ່າວເຖິງຄວາມຊັກຊ້າ. ຫຼັງຈາກປະສົບກັບຄວາມຜິດຫວັງ, ພວກເຂົາເຫັນວ່າພຣະຄຳພີຂໍ້ ນີ້ສຳຄັນຫຼາຍ: “ເພາະວ່ານິມິດນັ້ນຍັງລໍຖ້າເວລາທີ່ກຳນົດໄວ້, ແຕ່ໃນທີ່ສຸດມັນກໍຈະກ່າວອອກມາ, ມັນ ບໍ່ຕົວະ, ຖ້າເບິ່ງຄືຊັກຊ້າ ກໍຈົ່ງຄອຍຖ້າຈັກໜ້ອຍ, ມັນຈະບັງເກີດຂຶ້ນແນ່ນອນ, ຄົງບໍ່ຊັກຊ້າເກີນໄປ . . . ຄົນຊອບທຳຈະມີຊີວິດດຳລົງຢູ່ໂດຍ*ຄວາມເຊື່ອ*.” {GC 392.2}

ສ່ວນໜຶ່ງຂອງຄຳພະຍາກອນຂອງຜູ້ເຜີຍພຣະທຳເອເຊກຽນຍັງໃຫ້ກຳລັງໃຈ ແລະ ປອບໂຍນຜູ້ເຊື່ອ. “ແລ້ວອົງພຣະຜູ້ເປັນເຈົ້າກໍໄດ້ກ່າວແກ່ຂ້າພະເຈົ້າວ່າ, ມະນຸດເອີຍ ເປັນຫຍັງປະຊາຊົນອິດສະຣາເອນຈຶ່ງ ເວົ້າສຸພາສິດນີ້ຊ້ຳແລ້ວຊ້ຳອີກວ່າ ‘ເວລາຜ່ານໄປ ຄຳທຳນວາຍບໍ່ເຫັນການເປັນຈິງຈັກເທື່ອ?’ ຈົ່ງບອກ ພວກເຂົາວ່າ, ‘ພຣະເຈົ້າຢາເວພຣະເຈົ້າກ່າວດັ່ງນີ້ . . . ເວລາມາເຖິງແລ້ວ ແລະ ຄຳທຳນວາຍກໍກຳລັງ ການເປັນຈິງ, . . . ເຮົາຈະກ່າວ ແລະ ສິ່ງທີ່ເຮົາກ່າວກໍຈະເກີດຂຶ້ນ ມັນຈະບໍ່ຊັກຊ້າອີກຕໍ່ໄປ.’” “ຊາວ ອິດສະຣາເອນກ່າວວ່າ, ‘ນິມິດກັບການທຳນວາຍຕ່າງ ໆ ຂອງເຈົ້າ ແມ່ນເວົ້າເຖິງອະນາຄົດອັນຫ່າງ ໄກ’. ສະນັ້ນ, ຈົ່ງບອກພວກເຂົາວ່າ, ‘ອົງພຣະຜູ້ເປັນເຈົ້າ ພຣະເຈົ້າກ່າວວ່າ ມັນຈະບໍ່ຊັກຊ້າອີກຕໍ່ ໄປ. ຖ້ອຍຄຳທີ່ເຮົາໄດ້ເວົ້ານັ້ນຈະເກີດຂຶ້ນ.’” (ເອເຊກຽນ 12:21–25 LO2012, 27, 28). {GC 392.3}

ພວກທີ່ລໍຖ້າການສະເດັດມາຂອງພຣະຄຣິສ ມີຄວາມຊື່ນຊົມຍິນດີ ເພາະເຊື່ອວ່າພຣະເຈົ້າຜູ້ຊົ່ງຮູ້ແຈ້ງ ເຖິງທຸກສິ່ງຕັ້ງແຕ່ຕົ້ນຈົນຈົບ ຊົ່ງຮູ້ລ່ວງໜ້າເຖິງຄວາມຜິດຫວັງຂອງພວກເຂົາ ຈຶ່ງປະທານຖ້ອຍຄຳທີ່ ເສີມກຳລັງໃຈ ແລະ ໃຫ້ຄວາມຫວັງ. ຖ້າບໍ່ມີຂໍ້ພຣະຄຳພີຕັກເຕືອນພວກເຂົາໃຫ້ລໍຖ້າດ້ວຍຄວາມ ອົດທົນ ແລະ ຢຶດໝັ້ນໃນພຣະຄຳຂອງພຣະເຈົ້າເຊັ່ນນີ້ແລ້ວ ຄວາມສັດທາຂອງພວກເຂົາຄົງລົ້ມເຫຼວໃນ ເວລາທີ່ທົດສອບຄວາມເຊື່ອ. {GC 393.1}

ບົດຮຽນຈາກສາວພົມມະຈາລີສິບຄົນ

ຄຳອຸປະມາເລື່ອງຍິງສາວບໍຣິສຸດ 10 ຄົນໃນມັດທາຍບົດທີ 25 ກໍຍັງສະແດງເຖິງປະສົບການ ຂອງຄົນທີ່ລໍຄອຍການສະເດັດມາຂອງພຣະຄຣິສເຊັ່ນກັນ. ໃນມັດທາຍບົດທີ 24 ເມື່ອພວກສາວົກ ຖາມເຖິງໝາຍສຳຄັນຂອງການສະເດັດມາຂອງພຣະອົງ ແລະ ການສິ້ນໂລກ, ພຣະຄຣິສຊົ່ງຊີ້ແຈງ ເຖິງເຫດການສຳຄັນທັງຫຼາຍໃນປະຫວັດສາດໂລກ ແລະ ໃນຄຣິສຕະຈັກ ຕັ້ງແຕ່ການສະເດັດມາ ຄັ້ງທີໜຶ່ງຂອງພຣະອົງ ຕະຫຼອດຈົນເຖິງການສະເດັດມາຄັ້ງທີສອງ. ພຣະອົງຊົ່ງກ່າວເຖິງການທີ່ ນະຄອນເຢຣູຊາເລັມຈະຖືກທຳລາຍ, ຄວາມທຸກຍາກລຳບາກອັນຮ້າຍແຮງທີ່ຄຣິສຕະຈັກຈະຕ້ອງຜ່ານ ນັ້ນ ໂດຍການກົດຂີ່ຂົ່ມເຫັງຈາກພວກຈັກກະພັດທີ່ນັບຖືລັດທິນອກສາສະໜາ ແລະ ຈາກລະບອບ ສັນຕະປາປາ, ດວງອາທິດ ແລະ ດວງຈັນຈະອັບແສງ ແລະ ຈະມີປາກົດການດາວຕົກເໝືອນ ບັນດາດວງດາວເທິງທ້ອງຟ້າລ່ວງລົງມາສູ່ພື້ນດິນ. ຕໍ່ມາພຣະອົງຊົ່ງກ່າວເຖິງການມາຕັ້ງອານາຈັກຂອງ ພຣະອົງ ໂດຍກ່າວຄຳອຸປະມາເລື່ອງຜູ້ຮັບໃຊ້ 2 ກຸ່ມທີ່ລໍຖ້າການສະເດັດມາຂອງພຣະອົງ. ພໍຈົບບົດ ທີ 24 ແລ້ວ ບົດທີ 25 ຂຶ້ນຕົ້ນດ້ວຍຄຳວ່າ: “*ເມື່ອນັ້ນ* ອານາຈັກສະຫວັນປຽບເໝືອນຍິງສາວ ບໍຣິສຸດ 10 ຄົນ.” ຂໍ້ນີ້ໝາຍເຖິງຄຣິສຕະຈັກໃນຍຸກສຸດທ້າຍ, ເໝືອນໃນຕອນທ້າຍຂອງບົດທີ 24. ໃນ ຄຳອຸປະມານີ້ປະສົບການຂອງຄົນໃນຄຣິສຕະຈັກປຽບທຽບກັບການແຕ່ງງານຕາມວັດທະນະທຳຂອງຄົນ ໃນພາກຕາເວັນອອກ. {GC 393.2}

“ເມື່ອນັ້ນ, ອານາຈັກສະຫວັນປຽບເໝືອນຍິງສາວບໍຣິສຸດສິບຄົນທີ່ຖືໂຄມໄຟຂອງຕົນອອກໄປຮັບ ເຈົ້າບ່າວ. ຫ້າຄົນໃນພວກເຂົາເປັນຄົນໂງ່ ແລະ ອີກຫ້າຄົນເປັນຄົນສະຫຼາດ. ຝ່າຍພວກຄົນໂງ່ນັ້ນ

ຖືໂຄມໄຟໄປນຳ ແຕ່ບໍ່ເອົານ້ຳມັນໄປເຜື່ອ, ສ່ວນພວກຄົນສະຫຼາດນັ້ນຖືໂຄມໄຟໄປນຳ ແລະ ເອົານ້ຳມັນໃສ່ແກ້ວໄປເຜື່ອ. ຂະນະທີ່ເຈົ້າບ່າວຍັງບໍ່ມາ ພວກຍິງສາວທັງໝົດຕ່າງກໍເຫງົານອນ ແລະ ຫຼັບໄປ. ພໍເຖິງທ່ຽງຄືນກໍມີສຽງຮ້ອງດັງຂຶ້ນວ່າ, ‘ເຈົ້າບ່າວມາແລ້ວ ຈົ່ງອອກໄປຮັບເພິ່ນເຖີດ.’” (ມັດທາຍ 25:1–6). *{GC 393.3}*

ຄົນທີ່ລໍຄອຍການສະເດັດມາຂອງພຣະຄຣິສເຂົ້າໃຈວ່າ ການມາຂອງເຈົ້າບ່າວໃນຄຳອຸປະມາດັ່ງກ່າວໝາຍເຖິງການສະເດັດມາຂອງພຣະຄຣິສ ຕາມການປະກາດຂອງຂ່າວທູດສະຫວັນອົງທີໜຶ່ງ. ສ່ວນຍິງສາວບໍຣິສຸດທີ່ອອກໄປຮັບເຈົ້າບ່າວ ໄດ້ແກ່ການຟື້ນຟູຈິດວິນຍານຢ່າງກວ້າງຂວາງທີ່ເກີດຂຶ້ນ ເພາະການປະກາດວ່າພຣະເຢຊູຈະສະເດັດມາໃນບໍ່ຊ້າ. ທັງຄຳອຸປະມານີ້ ແລະ ຄຳອຸປະມາໃນຕອນທ້າຍຂອງມັດທາຍບົດທີ 24 ລ້ວນແຕ່ກ່າວເຖິງຄົນສອງກຸ່ມ. ຍິງບໍຣິສຸດທຸກຄົນເອົາໂຄມໄຟໄປນຳ ເຊິ່ງໝາຍເຖິງພຣະຄຳພີ ແລະ ດ້ວຍແສງສະຫວ່າງຈາກໂຄມໄຟນັ້ນ ພວກເຂົາຈຶ່ງອອກໄປຮັບເຈົ້າບ່າວ. “ຝ່າຍພວກຄົນໂງ່ນັ້ນຖືໂຄມໄຟໄປນຳ ແຕ່ບໍ່ເອົານ້ຳມັນໄປເຜື່ອ, ສ່ວນພວກຄົນສະຫຼາດນັ້ນຖືໂຄມໄຟໄປນຳ ແລະ ເອົານ້ຳມັນໃສ່ແກ້ວໄປເຜື່ອ.” (ມັດທາຍ 25:3–4). ພວກຍິງສາວສະຫຼາດໄດ້ຮັບພຣະຄຸນຂອງພຣະເຈົ້າ ກໍຄືຣິດອຳນາດຂອງພຣະວິນຍານບໍຣິສຸດທີ່ຟື້ນຟູຈິດວິນຍານ ແລະ ໃຫ້ຄວາມກະຈ່າງ, ເຮັດໃຫ້ພຣະຄຳຂອງພຣະອົງເປັນດັ່ງໂຄມໄຟທີ່ສ່ອງສະຫວ່າງໃນຫົນທາງທີ່ກ້າວເດີນ. ດ້ວຍຄວາມຢຳເກງພຣະເຈົ້າ, ພວກເຂົາໄດ້ສຶກສາພຣະຄຳພີເພື່ອຫາຄວາມຈິງ ແລະ ໄດ້ສະແຫວງຫາຄວາມບໍຣິສຸດຂອງຊີວິດ ແລະ ຈິດໃຈດ້ວຍຄວາມກະຕືລືລົ້ນ. ຄົນເຫຼົ່ານີ້ມີປະສົບການກັບພຣະເຈົ້າເປັນການສ່ວນຕົວ, ມີຄວາມເຊື່ອໃນພຣະອົງ ແລະ ໃນພຣະຄຳຂອງພຣະອົງ ເຊິ່ງຄວາມຜິດຫວັງ ແລະ ຄວາມຊັກຊ້າບໍ່ສາມາດທຳລາຍໄດ້. ສ່ວນຄົນອື່ນ “ຖືໂຄມໄຟໄປນຳ ແຕ່ບໍ່ເອົານ້ຳມັນໄປເຜື່ອ.” ຄົນເຫຼົ່ານີ້ຮັບເຊື່ອຕາມອາລົມຊົ່ວຄາວ; ເມື່ອໄດ້ຍິນຄຳປະກາດເຕືອນກໍເກີດຄວາມຢ້ານກົວ, ແຕ່ຄວາມເຊື່ອຂອງພວກເຂົາຂຶ້ນຢູ່ກັບຄວາມເຊື່ອຂອງພີ່ນ້ອງ; ພວກເຂົາພໍໃຈກັບການເຊື່ອຕາມຄວາມຮູ້ສຶກທີ່ດີ ເຊິ່ງເໝືອນກັບແສງທຽນທີ່ສະຫຼົວໆ ໂດຍພວກເຂົາບໍ່ເຂົ້າໃຈຄວາມຈິງຢ່າງຄົບຖ້ວນ ແລະ ບໍ່ມີຜົນແຫ່ງພຣະຄຸນຢ່າງແທ້ຈິງໃນຈິດໃຈ. ຄົນເຫຼົ່ານີ້ໄດ້ອອກໄປເພື່ອຕ້ອນຮັບອົງພຣະຜູ້ເປັນເຈົ້າ ໂດຍຫວັງວ່າຈະໄດ້ຮັບລາງວັນໃນທັນທີ ແຕ່ບໍ່ໄດ້ກຽມພ້ອມສຳລັບການລໍຄອຍທີ່ດົນນານ ຫຼື ຄວາມຜິດຫວັງ. ເມື່ອມີເຫດການມາທົດສອບຄວາມເຊື່ອ, ຄວາມເຊື່ອຂອງພວກເຂົາກໍລົ້ມເຫຼວ ແລະ ໄຟໃນຈິດໃຈກໍມອດລົງ. *{GC 393.4}*

“ຂະນະທີ່ເຈົ້າບ່າວຍັງບໍ່ມາ ພວກຍິງສາວທັງໝົດຕ່າງກໍເຫງົານອນ ແລະ ຫຼັບໄປ.” (ມັດທາຍ 25:5). ການທີ່ເຈົ້າບ່າວຊັກຊ້ານັ້ນ ໝາຍເຖິງເວລາທີ່ຜ່ານໄປຫຼັງຈາກທີ່ຄາດການວ່າ ພຣະເຢຊູຈະສະເດັດກັບມາ, ເຊິ່ງເຮັດໃຫ້ເກີດຄວາມຜິດຫວັງ ເພາະບໍ່ໄດ້ເປັນໄປຕາມເວລາທີ່ຄາດໝາຍ. ໃນຊ່ວງເວລາທີ່ສັບສົນນີ້, ຄົນທີ່ເຊື່ອແຕ່ຜິວເຜີນ ແລະ ບໍ່ຈິງໃຈນັ້ນ ກໍເລີ່ມຫວັ່ນໄຫວ ແລະ ບໍ່ໄດ້ເອົາໃຈໃສ່ເໝືອນໃນຕອນທຳອິດ; ສ່ວນຄົນທີ່ມີຄວາມເຊື່ອທີ່ອາໄສຄວາມຮູ້ໃນພຣະຄຳພີ ກໍມີຮາກຖານໃຫ້ຢືນໝັ້ນຄົງ ເຊິ່ງຄຶ້ນແຫ່ງຄວາມຜິດຫວັງບໍ່ສາມາດພັດພາພວກເຂົາໄປໄດ້. “ພວກຍິງສາວທັງໝົດຕ່າງກໍເຫງົານອນ ແລະ ຫຼັບໄປ:” ຄົນກຸ່ມໜຶ່ງຫຼັບໄຫຼໄປໂດຍປະຖິ້ມຄວາມເຊື່ອຢ່າງບໍ່ຮູ້ຮ້ອນຮູ້ໜາວ; ສ່ວນອີກກຸ່ມໜຶ່ງກໍອົດທົນລໍຖ້າເວລາທີ່ພຣະເຈົ້າຈະປະທານແສງສະຫວ່າງເພີ່ມເຕີມ. ແຕ່ໃນຄ່ຳຄືນແຫ່ງການທົດລອງຄວາມເຊື່ອນັ້ນ, ພວກຍິງສາວສະຫຼາດເບິ່ງຄືໄດ້ສູນເສຍຄວາມກະຕືລືລົ້ນ ແລະ ການອຸທິດຕົວໄປໃນລະດັບໜຶ່ງ. ຄົນທີ່ເຊື່ອແບບຜິວເຜີນ ແລະ ບໍ່ຈິງໃຈບໍ່ສາມາດເພິ່ງຄວາມເຊື່ອຂອງພີ່ນ້ອງອີກຕໍ່ໄປໄດ້. ຈະຢືນ ຫຼື ຈະລົ້ມກໍຂຶ້ນຢູ່ກັບຕົນເອງ. *{GC 394.1}*

ຊາຕານໃຊ້ຄວາມຫຼົງໄຫຼໃນສາສະໜາເປັນເຄື່ອງມື

ໃນຊ່ວງເວລານີ້, ຄວາມຄັ່ງໄຄ້ຫຼົງໄຫຼເລີ່ມເກີດຂຶ້ນ. ບາງຄົນທີ່ອ້າງວ່າເຊື່ອໃນຄຳປະກາດຢ່າງກະຕືລືລົ້ນ ໄດ້ປະຕິເສດພຣະຄຳຂອງພຣະເຈົ້າ ວ່າພຣະຄຳພີບໍ່ແມ່ນສິ່ງດຽວທີ່ຈະນຳຊີວິດໂດຍບໍ່ຜິດພາດ, ແລ້ວກໍຫັນໄປອ້າງວ່າ ຕົນໄດ້ຮັບການຊົ້ນນຳຈາກພຣະວິນຍານ. ຄົນເຫຼົ່ານີ້ປ່ອຍຕົວໃຫ້ເຮັດຕາມຄວາມຮູ້ສຶກນຶກຄິດ ແລະ ຈິນຕະນາການ. ມີບາງຄົນສະແດງເຖິງຄວາມກະຕືລືລົ້ນແບບມີອະຄະຕິ ແລະ ປິດຫູປິດຕາບໍ່ຟັງເຫດຜົນ; ຄົນກຸ່ມນີ້ປະນາມທຸກຄົນທີ່ບໍ່ຍອມຮັບແນວທາງຂອງຕົນ. ແຕ່ຄົນສ່ວນໃຫຍ່ທີ່ເຊື່ອເລື່ອງການສະເດັດມາຂອງພຣະຄຣິສ ບໍ່ໄດ້ໃສ່ໃຈກັບແນວຄິດ ແລະ ການປະຕິບັດຂອງພວກຫົວຮຸນແຮງເຫຼົ່ານັ້ນ; ຢ່າງໃດກໍຕາມ, ຄົນຄັ່ງສາສະໜາດັ່ງກ່າວ ເປັນເຫດໃຫ້ຄົນໃນສັງຄົມປະນາມຕີຕຽນການປະກາດສັດຈະທຳຄວາມຈິງ. {GC 395.1}

ຊາຕານໃຊ້ວິທີນີ້ເພື່ອຕໍ່ຕ້ານ ແລະ ທຳລາຍວຽກງານຂອງພຣະເຈົ້າ. ປະຊາຊົນຕື່ນຕົວກັບການປະກາດເລື່ອງການສະເດັດມາຂອງພຣະຄຣິສ; ມີຄົນບາບຫຼາຍພັນຄົນກັບໃຈ, ແມ່ນແຕ່ໃນຊ່ວງເວລາທີ່ຕ້ອງລໍຖ້າ ກໍມີຜູ້ຊາຍທີ່ສັດຊື່ບາງຄົນອຸທິດຕົວໃນການປະກາດຄວາມຈິງ. ຊາຕານມານຮ້າຍກຳລັງສູນເສຍປະຊາກອນຂອງມັນ; ດັ່ງນັ້ນ, ເພື່ອໃຫ້ວຽກງານຂອງພຣະເຈົ້າເສື່ອມເສຍ, ມັນຈຶ່ງພະຍາຍາມຫຼອກລວງຜູ້ຮັບເຊື່ອບາງຄົນ ແລະ ຍົວະພວກເຂົາໃຫ້ມີແນວຄິດທີ່ຮຸນແຮງ. ຈາກນັ້ນ, ຄົນຂອງມັນກໍພ້ອມທີ່ຈະຈັບຈ້ອງຄວາມຜິດພາດ, ຄວາມລົ້ມເຫຼວ ແລະ ຄວາມບໍ່ເໝາະສົມທຸກຢ່າງ ແລ້ວນຳໄປເວົ້າເກີນຈິງໃຫ້ປະຊາຊົນຟັງ ເພື່ອໃຫ້ຜູ້ທີ່ເຊື່ອເລື່ອງການສະເດັດມາ ແລະ ຄຳສອນຂອງຜູ້ປະກາດນັ້ນ ເປັນທີ່ກຽດຊັງຂອງຄົນໃນສັງຄົມ. ດັ່ງນັ້ນ, ຍິ່ງຊາຕານສາມາດຊັກຈູງຄົນທີ່ຢູ່ພາຍໃຕ້ການຄວບຄຸມຂອງມັນ ໃຫ້ອ້າງວ່າເຊື່ອໃນການສະເດັດມາຄັ້ງທີສອງໄດ້ຫຼາຍເທົ່າໃດ, ມັນກໍຍິ່ງໄດ້ປຽບໃນການຊີ້ໃຫ້ເຫັນວ່າ ຄົນເຫຼົ່ານີ້ເປັນຕົວແທນຂອງຜູ້ເຊື່ອທັງໝົດຫຼາຍເທົ່ານັ້ນ. {GC 395.2}

ຊາຕານເປັນ “ຜູ້ທີ່ກ່າວໂທດພວກພີ່ນ້ອງ.” (ພຣະນິມິດ 12:10). ເມື່ອມີຜູ້ໃດຈ້ອງຈັບຜິດຄົນຂອງພຣະເຈົ້າ ແລະ ຂໍ້ບົກຜ່ອງຂອງພວກເຂົາ ແລ້ວໄປຊີ້ບອກສິ່ງເຫຼົ່ານັ້ນໃຫ້ຄົນອື່ນເຫັນ ໂດຍບໍ່ເວົ້າເຖິງສ່ວນດີຂອງພວກເຂົາ, ຄົນນັ້ນກຳລັງເຮັດຕາມນິໄສຂອງຊາຕານ. ມັນເຄື່ອນໄຫວຢູ່ສະເໝີ ເມື່ອພຣະເຈົ້າກຳລັງນຳຄວາມລອດພົ້ນມາສູ່ມະນຸດ. ເມື່ອບຸດທັງຫຼາຍຂອງພຣະເຈົ້າມານະມັດສະການຕໍ່ພຣະພັກພຣະອົງ, ຊາຕານກໍມາຢູ່ທ່າມກາງພວກເຂົາ. ທຸກຄັ້ງທີ່ມີການຟື້ນຟູ ຊາຕານພ້ອມແລ້ວທີ່ຈະນຳຄົນທີ່ບໍ່ໄດ້ຮັບການປ່ຽນແປງໃນໃຈ ແລະ ມີຈິດໃຈບໍ່ໝັ້ນຄົງເຂົ້າມາ. ເມື່ອຄົນເຫຼົ່ານີ້ໄດ້ຮັບເຊື່ອຫຼັກຄວາມຈິງບາງປະການ ແລະ ໄດ້ເຂົ້າຮ່ວມກັບຜູ້ເຊື່ອ, ຊາຕານຈະໃຊ້ພວກເຂົາໃຫ້ນຳສະເໜີທິດສະດີທີ່ຈະຫຼອກລວງຄົນທີ່ບໍ່ລະວັງ. ການຖືກນັບຮວມກັບຄົນຂອງພຣະເຈົ້າ ບໍ່ໄດ້ພິສູດວ່າຄົນນັ້ນເປັນຄຣິສຕຽນທີ່ແທ້ຈິງ, ເຖິງຈະຢູ່ໃນໂບດ ຫຼື ຮ່ວມພິທີມະຫາສະໜິດກໍຕາມ. ຫຼາຍຄັ້ງຊາຕານກໍຢູ່ໃນການປະຊຸມສຳຄັນຂອງຄຣິສຕະຈັກ ໂດຍຜ່ານຮູບແບບຂອງຄົນທີ່ມັນສາມາດໃຊ້ເປັນເຄື່ອງມືໄດ້. {GC 395.3}

ຊາຕານມານຮ້າຍຕໍ່ສູ້ທຸກຄືບກ້າວ ຕະຫຼອດເສັ້ນທາງທີ່ຄົນຂອງພຣະເຈົ້າເດີນໄປສູ່ເມືອງສະຫວັນ. ຕະຫຼອດປະຫວັດສາດຂອງຄຣິສຕະຈັກ ບໍ່ເຄີຍມີການປະຕິຮູບໂດຍບໍ່ພົບກັບອຸປະສັກທີ່ຮ້າຍແຮງ; ໃນສະໄໝຂອງອັກຄະສາວົກໂປໂລກໍເຊັ່ນດຽວກັນ. ບໍ່ວ່າອາຈານໂປໂລຈະປະກາດສ້າງຄຣິສຕະຈັກຂຶ້ນຢູ່ສະຖານທີ່ແຫ່ງໃດ ກໍມີບາງຄົນເຮັດຄືຮັບເຊື່ອ, ແຕ່ກໍໄດ້ນຳຄຳສອນນອກຮີດເຂົ້າມາ ເຊິ່ງຖ້າຜູ້ໃດຮັບຄຳສອນດັ່ງກ່າວ ຄວາມຮັກທີ່ມີຕໍ່ຄວາມຈິງກໍຈະເຢັນຊາລົງໃນທີ່ສຸດ. ມາຕິນ ລູເທີ ກໍລຳບາກໃຈ ແລະ ເປັນທຸກຫຼາຍທີ່ສຸດ ຍ້ອນແນວປະຕິບັດຂອງພວກຄັ່ງສາສະໜາ ທີ່ອ້າງວ່າ

ພຣະເຈົ້າຊົງກ່າວຜ່ານພວກເຂົາໂດຍກົງ ແລະ ຕັ້ງຄວາມຄິດສ່ວນຕົວເໜືອຄຳສອນຂອງພຣະຄຳພີ. ມີ ຫຼາຍຄົນທີ່ຂາດຄວາມເຊື່ອ ແລະ ບໍ່ມີປະສົບການສ່ວນຕົວກັບພຣະເຈົ້າ ແຕ່ຮູ້ສຶກໝັ້ນໃຈໃນຕົວເອງ ຫຼາຍ ແລະ ເປັນຜູ້ທີ່ມັກຟັງເລື່ອງໃໝ່ໆ ແລະ ເວົ້າເລື່ອງໃໝ່ໃຫ້ຄົນອື່ນຟັງ; ຄົນແບບນີ້ຫຼົງການ ອວດອ້າງຂອງພວກອາຈານໃໝ່ ຈຶ່ງຮ່ວມມືກັບຜູ້ຮັບໃຊ້ຂອງຊາຕານ ໃນການນຳສິ່ງທີ່ພຣະເຈົ້າຊົງ ດົນໃຈໃຫ້ລູເທີສ້າງນັ້ນໃຫ້ພັງລົງມາ. ເຊັ່ນດຽວກັບສອງອ້າຍນ້ອງເວສະລີ ແລະ ຄົນອື່ນໆທີ່ນຳ ພຣະພອນມາສູ່ຊາວໂລກດ້ວຍແບບຢ່າງຊີວິດ ແລະ ຄວາມເຊື່ອຂອງພວກເພິ່ນ, ຄົນເຫຼົ່ານີ້ຕ້ອງປະເຊີນ ໜ້າກັບກົນອຸບາຍຂອງຊາຕານໃນທຸກບາດກ້າວ ທີ່ມັນຍົວະພວກທີ່ກະຕືລືລົ້ນເກີນເຫດ, ພວກທີ່ມີ ຈິດໃຈບໍ່ໝັ້ນຄົງ ແລະ ພວກທີ່ບໍ່ໄດ້ຮັບການປ່ຽນແປງໃໝ່ ໃຫ້ມີແນວຄິດທີ່ຮຸນແຮງຜິດພ້ຽນໃນທຸກ ຮູບແບບ. *{GC 396.1}*

ສ່ວນ ວິນລຽມ ມິນເລີ ບໍ່ເຫັນດີກັບແນວຄິດທີ່ນຳໄປສູ່ຄວາມຄັ່ງໄຄ້ຫຼົງໄຫຼ. ເພິ່ນກ່າວເໝືອນ ລູເທີວ່າ, ຄົນເຮົາຕ້ອງພິສູດວິນຍານທຸກຢ່າງໂດຍພຣະຄຳຂອງພຣະເຈົ້າ. ມິນເລີກ່າວວ່າ: “ຊາຕານມີ ອຳນາດເໜືອຈິດໃຈຂອງຄົນບາງຄົນໃນປັດຈຸບັນນີ້. ແລ້ວພວກເຮົາຈະຮູ້ໄດ້ຢ່າງໃດວ່າຄົນໜຶ່ງມີວິນຍານ ປະເພດໃດ? ພຣະຄຳພີໃຫ້ຄຳຕອບວ່າ: ‘ພວກທ່ານຈະຮູ້ຈັກເຂົາໄດ້ດ້ວຍຜົນຂອງເຂົາ.’ (ມັດທາຍ 7:20 LO1972). . . . ມີວິນຍານຫຼາຍຢ່າງເຄື່ອນໄຫວຢູ່ໃນໂລກ ແລະ ພຣະເຈົ້າຊົງສັ່ງໃຫ້ພວກເຮົາພິສູດ ວິນຍານເຫຼົ່ານັ້ນ. ວິນຍານໃດທີ່ບໍ່ໄດ້ນຳໄປສູ່ການດຳລົງຊີວິດຢ່າງຮອບຄອບ, ຊອບທຳ ແລະ ສັດຊື່ ບໍຣິສຸດຕໍ່ພຣະເຈົ້າໃນໂລກປັດຈຸບັນ ບໍ່ແມ່ນພຣະວິນຍານຂອງພຣະຄຣິສ. ນັບມື້ນັບວັນ ຂ້າພະເຈົ້າຍິ່ງ ໝັ້ນໃຈວ່າຊາຕານຢູ່ເບື້ອງຫຼັງການເຄື່ອນໄຫວທີ່ຜິດພ້ຽນເຫຼົ່ານີ້. ຫຼາຍຄົນໃນພວກເຮົາທີ່ອວດອ້າງວ່າຕົນ ເປັນຄົນບໍຣິສຸດຜຸດຜ່ອງໂດຍບໍ່ມີບ່ອນຕິ ແຕ່ພັດເຮັດຕາມທຳນຽມຂອງມະນຸດ ແລະ ເບິ່ງຄືວ່າບໍ່ຮູ້ຫຼັກ ຄວາມຈິງເລີຍ, ຄົນເຫຼົ່ານີ້ບໍ່ຕ່າງຫຍັງກັບຄົນທີ່ບໍ່ໄດ້ອວດອ້າງຄວາມບໍຣິສຸດ.”[1] “ວິນຍານແຫ່ງຄວາມເທັດ ຈະນຳພວກເຮົາອອກຈາກຄວາມຈິງ ໃນຂະນະທີ່ພຣະວິນຍານຂອງພຣະເຈົ້າຈະນຳພວກເຮົາເຂົ້າສູ່ຄວາມ ຈິງ. ແຕ່ອາດມີຄົນເວົ້າວ່າ, ‘ຄົນເຮົາສາມາດເຂົ້າໃຈຜິດໃນຂະນະທີ່ຄິດວ່າຕົນເຂົ້າໃຈຖືກຕ້ອງ. ຖ້າເປັນ ຢ່າງນັ້ນແລ້ວຈະເຮັດແນວໃດ?’ ຄຳຕອບຂອງເຮົາກໍຄື, ພຣະວິນຍານ ແລະ ພຣະຄຳພີສອດຄ່ອງ ກັນ. ຖ້າຄົນໜຶ່ງພິສູດຕົວເອງດ້ວຍພຣະຄຳຂອງພຣະເຈົ້າ ແລະ ພົບວ່າຕົນສອດຄ່ອງກັບພຣະຄຳພີທຸກ ປະການ ຄົນນັ້ນກໍຕ້ອງເຊື່ອວ່າຕົນມີຄວາມຈິງ. ແຕ່ຖ້າລາວພົບວ່າແນວຄິດທີ່ຂັບເຄື່ອນໃນໃຈນັ້ນ ບໍ່ ກົມກືນກັບເນື້ອຄວາມທັງໝົດຂອງພຣະບັນຍັດ ຫຼື ພຣະຄຳພີ ກໍໃຫ້ລາວດຳເນີນຊີວິດດ້ວຍຄວາມ ລະມັດລະວັງ ຢ້ານວ່າຈະຖືກຈັບໃນບ່ວງແຮ້ວຂອງພະຍາມານ.”[2] “ຫຼາຍຄັ້ງຂ້າພະເຈົ້າເຫັນຫຼັກຖານ ວ່າ ຄົນມີສິນທຳໃນໃຈຜ່ານນ້ຳຕາທີ່ອາບແກ້ມ, ສຽງສັ່ນ ແລະ ແວວຕາທີ່ສະແດງເຖິງຄວາມເຊື່ອຂອງຜູ້ ຟັງ ຫຼາຍກວ່າສຽງອຶກກະທຶກນຶກນອງທັງໝົດໃນວົງການຄຣິສຕຽນ.”[3] *{GC 396.2}*

ໃນຍຸກຂອງການປະຕິຮູບສາສະໜາຄັ້ງໃຫຍ່ໃນສະຕະວັດທີ 16 ພວກສັດຕູຂອງການປະຕິຮູບ ນັ້ນ ເອົາຜົນເສຍຂອງຄວາມຄັ່ງໄຄ້ຫຼົງໄຫຼທັງໝົດ ມາກ່າວຫາຄົນທີ່ເຮັດວຽກຢ່າງເອົາຈິງເອົາຈັງເພື່ອ ຕໍ່ຕ້ານແນວຄິດຮຸນແຮງດັ່ງກ່າວ. ຄົນທີ່ຕໍ່ຕ້ານຂະບວນການປະກາດເລື່ອງການສະເດັດມາຂອງພຣະ-ຄຣິສ ນຳນຳໃຊ້ວິທີການແບບດຽວກັນ; ຄົນເຫຼົ່ານີ້ບໍ່ພໍໃຈກັບການບິດເບືອນ ແລະ ການເວົ້າເກີນ ຄວາມຈິງເຖິງຄວາມຜິດພາດຂອງພວກຫົວຮຸນແຮງ ແລະ ພວກຄັ່ງສາສະໜາເທົ່ານັ້ນ, ແຕ່ພວກເຂົາ ຍັງເຜີຍແຜ່ເລື່ອງເສຍໆຫາຍໆທີ່ບໍ່ມີມູນຄວາມຈິງແມ່ນແຕ່ໜ້ອຍດຽວ. ຄົນເຫຼົ່ານັ້ນເຮັດໄປຍ້ອນມີ

[1] ບິ໊ສ (Bliss), ໜ້າ 236, 237.

[2] ວາລະສານ *The Advent Herald and Signs of the Times Reporter*, 15 ມັງກອນ 1845.

[3] ບິ໊ສ, ໜ້າ 282.

ອະຄະຕິ ແລະ ຄວາມງຽດຊັງ. ການປະກາດວ່າພຣະຄຣິສໃກ້ຈະສະເດັດມາແລ້ວ ໄດ້ລົບກວນຈິດໃຈ ຂອງພວກເຂົາ. ຄົນເຫຼົ່ານັ້ນຢ້ານວ່າມັນອາດເປັນຄວາມຈິງ, ແຕ່ກໍຫວັງວ່າຈະບໍ່ເປັນເຊັ່ນນັ້ນ. ນີ້ແມ່ນ ເຫດຜົນຢູ່ເບື້ອງຫຼັງ ທີ່ພວກເຂົາຕໍ່ສູ້ກັບຄົນທີ່ເຊື່ອວ່າພຣະເຢຊູໃກ້ຈະສະເດັດກັບມາ ແລະ ໂຈມຕີ ຫຼັກຄຳສອນດັ່ງກ່າວ. *{GC 397.1}*

ໃນສະໄໝຂອງອາຈານໂປໂລ ແລະ ໃນສະໄໝຂອງລູເທີມີຄົນຄັ່ງສາສະໜາ ແລະ ຄົນຫຼອກລວງ ເຂົ້າມາໃນຄຣິສຕະຈັກ, ແຕ່ສິ່ງນີ້ບໍ່ແມ່ນເຫດຜົນທີ່ຈະປະນາມຕີຕຽນວຽກງານຂອງພວກເພິ່ນ; ໃນສະໄໝ ການປະກາດເລື່ອງການສະເດັດມາຂອງພຣະຄຣິສກໍເຊັ່ນດຽວກັນ, ການທີ່ມີຜູ້ຄົນທີ່ເຊື່ອຢ່າງຮຸນແຮງ ຈຳນວນໜຶ່ງເຂົ້າມາ ກໍບໍ່ແມ່ນເຫດຜົນທີ່ຈະເໝົາສະຫຼຸບວ່າ ການເຄື່ອນໄຫວຂອງກຸ່ມແອັດເວັນຕິສນັ້ນ ບໍ່ໄດ້ມາຈາກພຣະເຈົ້າ. ຂໍໃຫ້ຄົນຂອງພຣະເຈົ້າຈົ່ງຕື່ນຂຶ້ນຈາກການນອນຫຼັບ ແລະ ເລີ່ມຕົ້ນການ ກັບໃຈ ແລະ ການປະຕິຮູບຢ່າງຈິງຈັງ; ໃຫ້ພວກເຂົາຄົ້ນຫາພຣະຄຳພີ ເພື່ອຮຽນຮູ້ຄວາມຈິງເຊິ່ງມີຢູ່ໃນ ພຣະເຢຊູ; ຂໍໃຫ້ພວກເຂົາອຸທິດຕົນທັງໝົດຕໍ່ພຣະເຈົ້າ ແລ້ວຈະພົບວ່າຊາຕານຍັງຄົງປະຕິບັດວຽກງານ ຂອງມັນຢ່າງຂະຫຍັນຂັນແຂງ ແລະ ຄອຍຈັບຈ້ອງຫາໂອກາດ. ມັນຈະສະແດງອຳນາດຂອງມັນອອກ ມາດ້ວຍການຫຼອກລວງທຸກຮູບແບບທີ່ເປັນໄປໄດ້, ໂດຍຮຽກເອີ້ນເຫຼົ່າທູດສະຫວັນທີ່ຕົກສູ່ຄວາມບາບໃຫ້ ມາຊ່ວຍ. *{GC 398.1}*

ສຽງຮ້ອງປະກາດຍາມທ່ຽງຄືນ

ການປະກາດເລື່ອງການສະເດັດມາຄັ້ງທີສອງຂອງພຣະຄຣິສ ບໍ່ແມ່ນສາເຫດທີ່ກໍ່ໃຫ້ເກີດຄວາມເຊື່ອທີ່ ຮຸນແຮງ ແລະ ການແບ່ງແຍກກັນ. ບັນຫາດັ່ງກ່າວເກີດຂຶ້ນໃນລະດູຮ້ອນປີ 1844 ເມື່ອກຸ່ມແອັດເວັນຕິສ ຕົກຢູ່ໃນສະພາບທີ່ສັບສົນ ແລະ ບໍ່ແນ່ໃຈກ່ຽວກັບຈຸດຢືນທີ່ແທ້ຈິງຂອງພວກເຂົາ. ການປະກາດຂ່າວ ຂອງທູດສະຫວັນອົງທີໜຶ່ງ ແລະ ຂ່າວທີ່ເອີ້ນວ່າ “ສຽງຮ້ອງປະກາດຍາມທ່ຽງຄືນ” ນັ້ນຊ່ວຍຢັບຢັ້ງ ຄວາມເຊື່ອທີ່ຮຸນແຮງ ແລະ ຊ່ວຍລະງັບການແຕກແຍກກັນ. ຜູ້ທີ່ມີສ່ວນຮ່ວມໃນການເຄື່ອນໄຫວ ເຫຼົ່ານີ້ເປັນນ້ຳໜຶ່ງໃຈດຽວກັນ; ພວກເຂົາຮັກເຊິ່ງກັນແລະກັນ ແລະ ຮັກພຣະເຢຊູຜູ້ທີ່ພວກເຂົາຄາດ ຫວັງວ່າຈະໄດ້ເຫັນໃນບໍ່ຊ້າ. ຄວາມເຊື່ອດຽວກັນ ແລະ ຄວາມຫວັງທີ່ລ້ຳຄ່າອັນດຽວກັນ ໄດ້ຊ່ວຍ ໃຫ້ພວກເຂົາພົ້ນຈາກອິດທິພົນທັງປວງຂອງມະນຸດ ແລະ ເປັນເກາะປ້ອງກັນຈາກການໂຈມຕີຂອງ ຊາຕານ. *{GC 398.2}*

“ຂະນະທີ່ເຈົ້າບ່າວຍັງບໍ່ມາ, ພວກຍິງສາວທັງໝົດຕ່າງກໍເຫງົານອນ ແລະ ຫຼັບໄປ. ພໍເຖິງ ທ່ຽງຄືນກໍມີສຽງຮ້ອງດັງຂຶ້ນວ່າ, ‘ເຈົ້າບ່າວມາແລ້ວ ຈົ່ງອອກໄປຮັບເພິ່ນເຖີດ.’ ຍິງສາວທຸກຄົນຈຶ່ງລຸກ ຂຶ້ນ ແລະ ຈັດຕຽມໂຄມໄຟຂອງຕົນ.” (ມັດທາຍ 25:5–7). ໃນລະດູຮ້ອນຂອງປີ 1844, ມີການ ປະກາດດ້ວຍຖ້ອຍຄຳຈາກພຣະຄຳພີໂດຍກົງວ່າ: “ເຈົ້າບ່າວມາແລ້ວ!” ເວລານັ້ນຢູ່ລະຫວ່າງສອງຊ່ວງ ຄື 1) ເວລາທີ່ພວກເຂົາເຄີຍເຂົ້າໃຈວ່າຄຳພະຍາກອນ 2,300 ວັນຈະສິ້ນສຸດລົງ ແລະ 2) ລະດູໃບໄມ້ ຫຼົ່ນຂອງປີດຽວກັນ ເຊິ່ງຕໍ່ມາໄດ້ພົບວ່າເປັນເວລາທີ່ຖືກຕ້ອງ. *{GC 398.3}*

ການເຄື່ອນໄຫວປະກາດດັ່ງກ່າວ ເກີດຂຶ້ນເມື່ອພວກເຂົາພົບວ່າ ຄຳສັ່ງຂອງກະສັດອາກຕາເຊເຊັດທີ ໃຫ້ຟື້ນຟູ ແລະ ສ້າງນະຄອນເຢຣູຊາເລັມຂຶ້ນໃໝ່ ມີຜົນບັງຄັບໃຊ້ໃນລະດູໃບໄມ້ຫຼົ່ນຂອງປີ 457 ກ່ອນ ຄ.ສ., ບໍ່ແມ່ນໃນຕົ້ນປີຕາມທີ່ເຄີຍເຊື່ອຖືກັນ. ຄຳສັ່ງນີ້ແມ່ນຈຸດເລີ່ມຕົ້ນຂອງໄລຍະເວລາ 2,300 ວັນ.[4]

[4] ໜຶ່ງວັນແທ່ງຄຳພະຍາກອນເທົ່າກັບໜຶ່ງປີ. ເບິ່ງ ຈົດບັນຊີ 14:34; ເອເຊກຽນ 4:6.

ດັ່ງນັ້ນ, ເມື່ອເລີ່ມນັບຈາກລະດູໃບໄມ້ຫຼົ່ນຂອງປີ 457 ກ່ອນ ຄ.ສ., ໄລຍະເວລາ 2,300 ປີ ຈຶ່ງສິ້ນສຸດ ລົງໃນລະດູໃບໄມ້ຫຼົ່ນຂອງປີ 1844. *{GC 398.4}*

ຂໍ້ສະເໜີທີ່ອີງໃສ່ຮູບແບບສັນຍະລັກໃນພຣະຄຳພີເດີມກໍໄດ້ຊີ້ບອກວ່າ "ການຊຳລະສະຖານນະມັດ-ສະການ" ຕ້ອງເກີດຂຶ້ນໃນລະດູໃບໄມ້ຫຼົ່ນຢ່າງແນ່ນອນ. ຂໍ້ສະຫຼຸບດັ່ງກ່າວຍິ່ງມີຄວາມຊັດເຈນຫຼາຍ ຂຶ້ນ ເມື່ອມີການພິຈາລະນາເຖິງຄວາມສຳເລັດຂອງຮູບແບບສັນຍະລັກຕ່າງ ໆ ທີ່ກ່ຽວຂ້ອງກັບການສະເດັດ ມາຄັ້ງທຳອິດຂອງພຣະຄຣິສ. *{GC 399.1}*

ການຂ້າລູກແກະໃນເທດສະການປັດສະຄາ ເປັນເງົາສັນຍະລັກສະທ້ອນເຖິງການສິ້ນພຣະຊົນຂອງ ພຣະຄຣິສ. ອາຈານໂປໂລກ່າວວ່າ: "ພຣະຄຣິສຜູ້ຊົງເປັນລູກແກະປັດສະຄາຂອງພວກເຮົານັ້ນໄດ້ ຖືກຂ້າບູຊາແລ້ວ." (1 ໂກຣິນໂທ 5:7). ຟ່ອນເຂົ້າຜົນທຳອິດ, ເຊິ່ງໃນເທດສະການປັດສະຄາໄດ້ ຖືກແກວ່ງຂຶ້ນຕໍ່ພຣະພັກພຣະຜູ້ເປັນເຈົ້າ, ເປັນສັນຍະລັກເຖິງການຟື້ນຄືນພຣະຊົນຂອງພຣະຄຣິສ. ອາຈານໂປໂລກ່າວເຖິງການຄືນພຣະຊົນຂອງພຣະອົງ ແລະ ການຟື້ນຄືນຊີບຂອງໄພ່ພົນທັງປວງ ຂອງພຣະອົງວ່າ: "ພຣະຄຣິສເປັນຜົນແລກ ຕໍ່ໄປແມ່ນພວກທີ່ເປັນຂອງພຣະຄຣິສໃນເວລາທີ່ພຣະອົງ ສະເດັດມາປາກົດ." (1 ໂກຣິນໂທ 15:23). ເຊັ່ນດຽວກັນກັບຟ່ອນເຂົ້າຜົນທຳອິດທີ່ຖືກເກັບກ່ຽວກ່ອນ ລະດູ, ພຣະຄຣິສຊົງເປັນຜົນທຳອິດແຫ່ງການເກັບກ່ຽວສູ່ຊີວິດອັນບໍ່ຮູ້ຈັກຕາຍຂອງຜູ້ທີ່ໄດ້ຮັບການໄຖ່, ເຊິ່ງ ໃນການຟື້ນຄືນຊີບທີ່ຈະມາເຖິງ ພວກເຂົາຈະໄດ້ຖືກເກັບກ່ຽວເຂົ້າສູ່ສາງຂອງພຣະເຈົ້າ. *{GC 399.2}*

ຮູບແບບສັນຍະລັກເຫຼົ່ານີ້ໄດ້ສຳເລັດ ບໍ່ພຽງແຕ່ໃນລັກສະນະຂອງເຫດການທີ່ເກີດຂຶ້ນເທົ່ານັ້ນ ແຕ່ ໃນເລື່ອງເວລາອີກດ້ວຍ. ໃນວັນທີ 14 ຂອງເດືອນທຳອິດຕາມປະຕິທິນຊາວຢິວ, ວັນ ແລະ ເດືອນ ດຽວກັນກັບທີ່ລູກແກະປັດສະຄາໄດ້ຖືກຂ້າເປັນເວລາ 15 ສະຕະວັດກ່ອນໜ້ານັ້ນ, ພຣະຄຣິສໄດ້ ສະເຫວີຍປັດສະຄາກັບພວກສາວົກຂອງພຣະອົງ ແລະ ໄດ້ສະຖາປະນາພິທີທີ່ລະນຶກເຖິງການສິ້ນ ພຣະຊົນຂອງພຣະອົງໃນຖານະ "ລູກແກະຂອງພຣະເຈົ້າຜູ້ຊົງຮັບເອົາບາບກຳຂອງມະນຸດສະໂລກໄປ ເສຍ." (ໂຢຮັນ 1:29). ໃນຄືນດຽວກັນນັ້ນ, ພຣະອົງຖືກຈັບດ້ວຍມືອັນຊົ່ວຊ້າ ເພື່ອນຳໄປຂ້າໂດຍ ການຄຶງໄວ້ທີ່ໄມ້ກາງແຂນ. ຕໍ່ມາພຣະອົງຟື້ນຄືນພຣະຊົນໃນວັນທີສາມ ເຊິ່ງເຮັດໃຫ້ຮູບແບບສັນຍະລັກ ຂອງການແກວ່ງຟ່ອນເຂົ້ານັ້ນສຳເລັດ. ພຣະອົງຊົງເປັນ "ຜົນແລກໃນພວກຄົນທີ່ລ່ວງລັບໄປແລ້ວ ນັ້ນ" (1 ໂກຣິນໂທ 15:20) ແລະ ຊົງເປັນຕົວຢ່າງຂອງຜູ້ຊອບທຳທັງປວງທີ່ຈະຟື້ນຈາກຄວາມ ຕາຍ. "ຮ່າງກາຍອັນຕ່ຳຕ້ອຍ" ຂອງຜູ້ຊອບທຳຈະຖືກປ່ຽນແປງ "ໃຫ້ເປັນເໝືອນພຣະກາຍອັນຊົງ ສະຫງ່າຣາສີຂອງພຣະອົງ." (ຟີລິບປອຍ 3:21). *{GC 399.3}*

ໃນທຳນອງດຽວກັນ, ຮູບແບບສັນຍະລັກທີ່ກ່ຽວຂ້ອງກັບການສະເດັດມາຄັ້ງທີສອງຂອງພຣະຄຣິສ ຈະ ຕ້ອງສຳເລັດຕາມເວລາທີ່ກຳນົດໄວ້ໃນສັນຍະລັກເຫຼົ່ານັ້ນ. ຕາມລະບົບການຖວາຍບູຊາທີ່ກຳນົດໄວ້ໃນ ສະໄໝຂອງໂມເຊ ການຊຳລະຫໍເຕັ້ນສັກສິດ, ຫຼືທີ່ເອີ້ນວ່າ ວັນລຶບລ້າງມົນທິນບາບອັນຍິ່ງໃຫຍ່, ເກີດຂຶ້ນ ໃນວັນທີ 10 ເດືອນທີ 7 ຕາມປະຕິທິນຊາວຢິວ.[5] ໃນວັນນັ້ນ, ຫຼັງຈາກທີ່ມະຫາປະໂຣຫິດ ໄດ້ທຳການ ຊຳລະບາບໃຫ້ແກ່ຄົນອິດສະຣາເອນທັງໝົດ, ເຊິ່ງເປັນການລຶບລ້າງຄວາມບາບຂອງພວກເຂົາອອກຈາກ ຫໍເຕັ້ນສັກສິດ, ເພິ່ນຈຶ່ງອອກມາອວຍພອນແກ່ປະຊາຊົນ. ດັ່ງນັ້ນ, ຜູ້ຄົນຈຶ່ງເຊື່ອກັນວ່າ ພຣະຄຣິສ (ຜູ້ ຊົງເປັນມະຫາປະໂຣຫິດຂອງພວກເຮົາ) ຈະສະເດັດມາເພື່ອຊຳລະໂລກໂດຍການທຳລາຍບາບ ແລະ ຄົນບາບ, ແລະຈະອວຍພອນໄພ່ພົນຂອງພຣະອົງທີ່ລໍຖ້າຢູ່ນັ້ນ ໂດຍການປະທານຊີວິດນິຣັນ. ໃນ ປີ 1844, ວັນທີ 10 ຂອງເດືອນທີ 7 ຕາມປະຕິທິນຊາວຢິວກົງກັບວັນທີ 22 ເດືອນຕຸລາ, ເຊິ່ງ

[5] ເບິ່ງ ລະບຽບພວກເລວີ 16:29–34.

ເປັນ ອັນ ສຳ ຄັນ ແຫ່ງ ການ ລຶບ ລ້າງ ຄວາມ ບາບ ແລະ ການ ຊຳ ລະ ພຣະ ວິ ຫານ. ດັ່ງ ນັ້ນ, ຜູ້ ຄົນ ຈຶ່ງ ເຊື່ອ ກັນ ວ່າ ອົງ ພຣະ ຜູ້ ເປັນ ເຈົ້າ ຈະ ສະ ເດັດ ມາ ໃນ ວັນ ດັ່ງ ກ່າ ວ. ຄວາມ ເຫັນ ນີ້ ສອດ ຄ່ອງ ກັບ ຫຼັກ ຖານ ທີ່ ໄດ້ ນຳ ສະ ເໜີ ໄປ ແລ້ ວ ວ່າ ຄຳ ທຳ ນວ ຍ ເລື່ອ ງ 2,300 ວັນ ຈະ ສິ້ນ ສຸດ ລົງ ໃນ ລະ ດູ ໃບ ໄມ້ ຫຼົ່ນ ຂອງ ປີ 1844, ເຊິ່ງ ຂໍ້ ສະ ຫຼຸບ ນັ້ນ ເບິ່ງ ຄື ຍາ ກ ທີ່ ຈະ ປະ ຕິ ເສດ ໄດ້. *{GC 399.4}*

ໃນ ຄຳ ອຸ ປະ ມາ ໃນ ມັດ ທາ ຍ ບົດ ທີ 25 ນັ້ນ, ຫຼັງ ຈາ ກ ໄລ ຍະ ເວ ລາ ແຫ່ງ ການ ລໍ ຖ້ າ ແລະ ການ ຫຼັບ ໄຫຼ ແລ້ ວ ເຈົ້າ ບ່າ ວ ກໍ ໄດ້ ມາ ເຖິ ງ. ເລື່ອ ງ ນີ້ ສອດ ຄ່ອ ງ ກັບ ເຫດ ຜົນ ທີ່ ນຳ ສະ ເໜີ ໄປ ກ່ອ ນ ໜ້ າ ນີ້, ທັ ງ ສອດ ຄ່ອ ງ ກັບ ຄຳ ພະ ຍາ ກອ ນ ແລະ ເງົ າ ສັນ ຍະ ລັ ກ ຕ່າ ງ ໆ ດ້ ວ ຍ. ສິ່ ງ ເຫຼົ່ າ ນີ້ ສ້ າ ງ ຄວາມ ເຊື່ອ ໝັ້ ນ ຢ່ າ ງ ແຮ ງ ກ້ າ ໃນ ຂໍ້ ສະ ເໜີ ດັ່ ງ ກ່ າ ວ; “ສຽ ງ ຮ້ ອ ງ ປະ ກາ ດ ຍາ ມ ທ່ ຽ ງ ຄືນ” ຈຶ່ ງ ຖືກ ນຳ ໄປ ປ່ າ ວ ປະ ກາ ດ ໂດ ຍ ຜູ້ ເຊື່ ອ ຫຼ າ ຍ ພັ ນ ຄົ ນ. *{GC 400.1}*

ຄື ກັ ບ ຄື້ ນ ຍັ ກ, ການ ເຄື່ ອ ນ ໄຫ ວ ນີ້ ໄດ້ ແຜ່ ຂະ ຫ ຍ າ ຍ ໄປ ທົ່ ວ ດິ ນ ແດ ນ, ຈາ ກ ເມື ອ ງ ສູ່ ເມື ອ ງ, ຈາ ກ ບ້ າ ນ ສູ່ ບ້ າ ນ ແລະ ເຂົ້ າ ໄປ ເຖິ ງ ເຂ ດ ຊົ ນ ນະ ບົ ດ ທີ່ ຫ່ າ ງ ໄ ກ, ຈົ ນ ຄົ ນ ຂອ ງ ພຣ ະ ເຈົ້ າ ທີ່ ກຳ ລັ ງ ລໍ ຖ້ າ ການ ສະ ເດັ ດ ມາ ຂອ ງ ພຣ ະ ຄ ຣິ ສ ໄດ້ ຕື່ ນ ຕົ ວ ຢ່ າ ງ ເຕັ ມ ທີ່. ພ້ ອ ມ ກັ ນ ນັ້ ນ, ຄວາມ ຄັ ່ ງ ໄ ຄ້ ທາ ງ ສາ ສະ ໜ າ ໄດ້ ຈ າ ງ ຫ າ ຍ ໄປ ຕໍ່ ໜ້ າ ການ ປະ ກາ ດ ນີ້ ດັ ່ ງ ນ ້ ຳ ໝ ອ ກ ຍາ ມ ເຊົ້ າ ທີ່ ລະ ລາ ຍ ໄປ ເມື ່ ອ ແສ ງ ຕາ ເວັ ນ ສ າ ດ ສ ່ ອ ງ. ໃນ ຂະ ນະ ດຽ ວ ກັ ນ, ຄວາມ ສົ ງ ໄ ສ ແລະ ຄວາມ ສັ ບ ສົ ນ ໄ ດ້ ຫ າ ຍ ໄປ ຈ າ ກ ໃ ຈ ຂອ ງ ຜູ້ ເຊື ່ ອ ແລະ ຄວາມ ຫ ວັ ງ ກັ ບ ຄວາມ ກ້ າ ຫ ານ ໄ ດ້ ເຂົ ້ າ ມ າ ແທ ນ ທ ີ ່. ສິ ່ ງ ທ ີ ່ ໜ ້ າ ສ ັ ງ ເ ກ ດ ກ ໍ ຄ ື, ການ ປ ະ ກ າ ດ ນ ີ ້ ບ ໍ ່ ມ ີ ລ ັ ກ ສ ະ ນ ะ ສ ຸ ດ ຂ ໍ ້ ທ ີ ່ ມ ັ ກ ເ ກ ີ ດ ຂ ຶ ້ ນ ເ ມ ື ່ ອ ຄ ວ າ ມ ກ ะ ຕ ື ລ ື ລ ົ ້ ນ ຂ ອ ງ ມ ะ ນ ຸ ດ ບ ໍ ່ ໄ ດ ້ ຖ ື ກ ຫ ຼ ່ ຫ ຼ ອ ມ ດ ້ ວ ຍ ພ ร ะ ค ำ ແ ล ะ ບ ໍ ່ ໄ ດ ้ ถ ื ก น ำ พ า โ ด ย พ ร ะ อ ิ น ย า น ข อ ง พ ร ะ เ จ ้ า . ม ั น ค ้ า ย ค ื ก ั บ ช ่ ว ง เ ว ล า ใ น ป ะ ห ว ั ด ส า ด ข อ ง ช า ว อ ิ ด ส ะ ร า เ อ ล, เ ม ื ่ อ พ ว ก เ ข า ไ ด ้ ถ ่ อ ม ใ จ ล ง ແ ล ะ ห ั น ก ั บ ม า ห า พ ร ะ เ จ ้ า ห ล ั ง จ า ก ไ ด ้ ย ิ น ค ำ ป ะ ก า ด เ ต ื อ น จ า ก ผ ู ้ ร ั บ ใ ช ้ ข อ ง พ ร ะ อ ง ค ์. ການ ປະ ກາ ດ ນີ້ ສະ ແ ດ ງ ເ ຖ ິ ງ ລ ັ ກ ສ ະ ນ ะ ສ ะ ເ ພ า ะ ข อ ง ว ิ ง ว ิ ง า น ข อ ง พ ร ะ เ จ ้ า ที่ ເ ห ็ น ไ ด ้ ใ น ท ุ ก ย ุ ค ท ุ ก ส ะ ไ ห ม. ບ ่ ມ ີ ก า ร ะ ห ว ่ า ง ก ะ โ ด ด โ ล ด เ ต ้ น, ແ ต ่ ม ี ก า ร ส ำ ร ว จ ใ จ อ ย ่ า ง เ ล ิ ก เ ช ิ ่ ง, ก า ร ส า ร ะ พ า บ บ า บ ແ ล ะ ก า ร ป ะ ถ ิ ้ ม ท า ง ฝ ่ า ย โ ล ก. ท ุ ก ค ์ ค ื น ท ี ่ ล ำ ถ ้ า ก า ร ส ะ เ ด ็ ด ม า น ั ้ น ก ็ ม ี ค ว า ม ท ุ ก ใ จ ห ล า ย ใ น ก า ร ก ร ะ ท ำ พ ้ อ ม ท ี ่ จ ะ พ บ พ ร ะ อ ง ค ์. ມ ີ ก า ร อ ะ ธ ิ ฐ า น อ ย ่ า ง บ ่ ย ุ ด ย ั ้ ง ແ ล ะ ก า ร อ ุ ท ิ ด ถ ว า ย ต ั ว ต ่ ำ พ ร ะ เ จ ้ า อ ย ่ า ง บ ่ ม ี ข ้ ี ແ ม ้. *{GC 400.2}*

ມິ ນ ເ ລ ີ ໄ ດ ้ ອ ะ ธ ิ บ า ย เ ถ ิ ง ก า ร ป ะ ก า ด ใ น ส ะ ไ ห ม น ั ้ น ว ่ า: “ບ ่ ม ี ก า ร ส ะ ແ ด ง อ อ ก เ ถ ิ ง ค ว า ม ป ิ ต ิ ย ิ น ด ี อ ย ่ า ง เ ต ็ ม ท ี ่ ເ พ ร ะ ค ว า ม ช ื ่ น ช ม ย ิ น ด ี น ั ้ น ถ ื ก เ ก ็ บ ไ ว ้ ส ำ ร ั บ เ ว ล า ใ น อ ะ น า ค ต ิ ເ ม ื ่ อ ส ะ ห ว ั น ແ ล ะ ແ ผ ่ น ด ิ น โ ล ก ท ั ้ ง ห ม ด จ ะ ร ่ ว ม ก ั น ช ื ่ น ช ม ย ิ น ด ี ด ้ ว ย ค ว า ม ส ุ ข ແ ล ะ ร ั ด ส ะ ห ม ี พ า บ ท ี ่ บ ่ อ า จ บ ั น ล ะ ย า ย ไ ด ้. ບ ่ ม ี ส ຽ ง ໂ ຮ ่ ร ้ อ ง ด ั ง ข ึ ้ น ເ พ ร ะ พ ว ก เ ข า ล ำ ถ ้ า ก า ร ໂ ຮ ่ ร ้ อ ง จ า ก ส ะ ห ว ั น. ส ่ ว น พ ว ก ท ี ่ ร ้ อ ง ก ำ ง ่ ว บ ส ะ ห ง ่ ว บ, พ ว ก เ ข า ก ำ ล ั ง ล ำ ถ ้ า ท ี ่ จ ะ เ ข ้ า ร ่ ว ม ก ั บ เ ห ล ่ า ท ู ต ส ะ ห ว ั น ແ ล ะ ค ะ น ะ ท ี ่ ร ้ อ ง จ า ก ส ะ ห ว ั น. . . . ບ ่ ม ี ก า ร ข ั ด แ ย ้ ง ท า ง ค ว า ม ค ิ ด; ท ุ ก ค ์ ม ี จ ิ ด ใ จ ແ ล ะ ค ว า ม ค ิ ด เ ป ็ น ห ึ ่ ง ด ຽ ว ก ั น.”[6] *{GC 401.1}*

ອີ ກ ຄົ ນ ໜຶ ່ ງ ທ ີ ່ ໄ ດ ้ ม ี ส ่ ว น ร ่ ว ม ใ น ก า ร ป ะ ก า ด ใ น ย ุ ค น ั ้ น ເ ป ็ น พ ะ ย า น ว ่ า: “ก า ร ป ะ ก า ด น ั ้ น ส ่ ง ผ ล ใ ห ้ ค น ไ ต ่ ต อ ง ส ำ ร ว จ ใ จ ข อ ง ต น ແ ล ะ ถ ่ อ ม ใ จ ล ง อ ย ่ า ง ส ุ ด ซ ึ ้ ง ต ่ อ พ ร ะ เ จ ้ า ผ ู ้ ส ู ง ส ุ ด ใ น ฟ ้ า ส ะ ห ว ั น; ม ั น ເ ร ็ ด ใ ห ้ ค น ເ ล ิ ก ผ ู ก พ ั น ก ั บ ส ิ ่ ง ข อ ง ฝ ่ า ย โ ล ก, ย ุ ต ิ ข ้ อ ข ั ด แ ย ้ ง ແ ล ะ ป ะ ส า น ค ว า ม บ า ด ห ม า ง. พ ว ก เ ข า ส า ร ะ พ า บ ค ว า ม ผ ิ ด ต ่ อ พ ร ะ เ จ ้ า ด ้ ว ย ค ว า ม อ ่ อ น น ้ อ ม ถ ่ อ ม ต น, ท ั ้ ง ไ ด ้ อ ้ อ น ว อ น พ ร ะ อ ง ค ์ ด ้ ว ย ใ จ ส ำ น ึ ก ผ ิ ด ແ ล ะ ข อ ก ช ้ ำ, ເ พ ื ่ อ ข อ ใ ห ้ พ ร ะ อ ง ค ์ ช ่ ว ย ช ี ว ะ ไ พ ແ ล ะ ย อ ม ร ั บ พ ว ก เ ข า. ก า ร

[6] ປ ู ນ ิ ส, ໜ ้ า 270, 271.

ປະກາດນັ້ນເຮັດໃຫ້ຄົນຖ່ອມໃຈລົງຢ່າງສຸດຊຶ້ງ ແບບທີ່ພວກເຮົາບໍ່ເຄີຍພົບເຫັນມາກ່ອນ. ດັ່ງທີ່ພຣະເຈົ້າ ຊົງບັນຊາໄວ້ ໂດຍຜ່ານຜູ້ເຜີຍພຣະທຳໂຢເອນ: ເມື່ອວັນຍິ່ງໃຫຍ່ຂອງອົງພຣະຜູ້ເປັນເຈົ້າໃກ້ເຂົ້າມາ ມັນ ຈະເຮັດໃຫ້ຄົນຈີກໃຈຂອງຕົນ ບໍ່ແມ່ນຈີກເສື້ອຜ້າ (ເບິ່ງ ໂຢເອນ 2:13). ສະນັ້ນ, ຈຶ່ງມີການຫັນກັບ ມາຫາພຣະເຈົ້າດ້ວຍການອົດອາຫານ, ການຮ້ອງໄຫ້ ແລະ ການຄ່ຳຄວນ. ດັ່ງທີ່ພຣະເຈົ້າຊົງກ່າວ ໄວ້ໂດຍຜ່ານຜູ້ເຜີຍພຣະທຳເຊກາຣີຢາ, ພຣະອົງໄດ້ເຮັດໃຫ້ລູກທັງຫຼາຍຂອງພຣະອົງເຕັມໄປດ້ວຍຈິດໃຈ ເມດຕາ ແລະ ຮັກການພາວັນນາອະທິຖານ; ພວກເຂົາໄດ້ແນມເບິ່ງພຣະອົງຜູ້ທີ່ພວກເຂົາໄດ້ແທງຈົນ ຕາຍ, ມີການໄວ້ທຸກຢ່າງຂົມຂື່ນເທິງຜືນແຜ່ນດິນ. (ເບິ່ງ ເຊກາຣີຢາ 12:10). . . . ແລະຜູ້ທີ່ເຝົ້າລໍຖ້າ ພຣະອົງກໍໄດ້ຖ່ອມຈິດໃຈຂອງຕົນລົງຕໍ່ພຣະພັກພຣະອົງ."[7] *{GC 401.2}*

ການເຄື່ອນໄຫວໃນລະດູໃບໄມ້ຫຼົ່ນປີ 1844 ມີຄວາມບົ່ກຜ່ອງຂອງມະນຸດ ແລະ ອຸບາຍຂອງຊາຕານ ໜ້ອຍທີ່ສຸດ ເມື່ອທຽບກັບການເຄື່ອນໄຫວທາງສາສະໜາທີ່ຍິ່ງໃຫຍ່ອື່ນ ໆ ນັບຕັ້ງແຕ່ສະໄໝຂອງພວກ ອັກຄະສາວົກເປັນຕົ້ນມາ. ຫຼາຍປີຜ່ານໄປຈົນເຖິງປັດຈຸບັນ, ທຸກຄົນທີ່ມີສ່ວນຮ່ວມໃນເຫດການສຳຄັນ ນັ້ນ ແລະ ຍັງຄົງຢຶດໝັ້ນໃນຄວາມຈິງ[8] ກໍຍັງສຳຜັດໄດ້ເຖິງການຊົ່ນນຳອັນເຫັນໄດ້ຊັດເຈນໃນວຽກງານ ທີ່ໄດ້ຮັບພຣະພອນນັ້ນ ແລະ ຢືນຢັນວ່າມັນເປັນວຽກງານທີ່ມາຈາກພຣະເຈົ້າ. *{GC 401.3}*

ເມື່ອມີສຽງຮ້ອງວ່າ "ເຈົ້າບ່າວມາແລ້ວ ຈົ່ງອອກໄປຮັບເພິ່ນເຖີດ" ຜູ້ທີ່ລໍຖ້າຢູ່ນັ້ນກໍ "ລຸກຂຶ້ນ ແລະ ຈັດຕຽມໂຄມໄຟຂອງຕົນ." (ມັດທາຍ 25:6–7). ພວກເຂົາສຶກສາພຣະຄຳຂອງພຣະເຈົ້າດ້ວຍຄວາມ ກະຕືລືລົ້ນຢ່າງບໍ່ເຄີຍມີມາກ່ອນ. ພຣະເຈົ້າສົ່ງທູດສະຫວັນມາເພື່ອໃຫ້ກຳລັງໃຈຜູ້ທີ່ທໍ້ຖອຍ ແລະ ປຸກ ພວກເຂົາໃຫ້ຕື່ນຂຶ້ນກຽມຕົວໃຫ້ພ້ອມຮັບຄຳທີ່ປະກາດນັ້ນ. ວຽກງານນີ້ບໍ່ໄດ້ຂຶ້ນກັບສະຕິປັນຍາ ແລະ ຄວາມຮູ້ຂອງມະນຸດ ແຕ່ຂຶ້ນກັບຣິດອຳນາດຂອງພຣະເຈົ້າ. ບໍ່ແມ່ນຄົນທີ່ມີຄວາມສາມາດຫຼາຍທີ່ສຸດ ແຕ່ ແມ່ນຄົນທີ່ຖ່ອມໃຈ ແລະ ອຸທິດຕົນຫຼາຍທີ່ສຸດທີ່ເປັນກຸ່ມທຳອິດທີ່ຮັບຮູ້ ແລະ ເຊື່ອຟັງການຊົ່ງຮຽກເອີ້ນ ນັ້ນ. ຊາວນາໄດ້ປະປ່ອຍພືດຜົນຂອງຕົນໄວ້ໃນທົ່ງນາ ແລະ ຊ່າງຝີມືໄດ້ວາງເຄື່ອງມືຂອງຕົນລົງ ແລ້ວ ພາກັນອອກໄປປະກາດເຕືອນດ້ວຍຄວາມຊົ່ນຊື່ນຍິນດີທັງນ້ຳຕາ. ແຕ່ຜູ້ທີ່ເຄີຍນຳໃນການປະກາດເລື່ອງ ການສະເດັດມານັ້ນ ກັບກາຍເປັນພວກສຸດທ້າຍທີ່ເຂົ້າຮ່ວມໃນຂະບວນການປະກາດໃນຄັ້ງນີ້. ໂດຍ ທົ່ວໄປແລ້ວ ບັນດາຄຣິສຕະຈັກໄດ້ປະຕິເສດຄຳສອນດັ່ງກ່າວ ແລະ ຜູ້ທີ່ຮັບເຊື່ອຄຳປະກາດຈຳນວນ ຫຼາຍ ໄດ້ແຍກອອກຈາກຄຣິສຕະຈັກຂອງຕົນ. ພາຍໃຕ້ການຊົ່ນນຳຂອງພຣະເຈົ້າ, "ສຽງຮ້ອງປະກາດ ຍາມທ່ຽງຄືນ" ໄດ້ປະສານກັບຂ່າວຂອງທູດສະຫວັນອົງທີສອງ, ເຮັດໃຫ້ການປະກາດມີພະລັງຍິ່ງ ຂຶ້ນ. *{GC 402.1}*

ຄຳປະກາດວ່າ, "ເຈົ້າບ່າວມາແລ້ວ" ບໍ່ໄດ້ເປັນເລື່ອງຂອງການຕອກຍ້ຳເຫດຜົນຫຼາຍປານໃດ ເຖິງ ແມ່ນວ່າມີຫຼັກຖານຈາກພຣະຄຳພີທີ່ຈະແຈ້ງ ແລະ ໜັກແໜ້ນກໍຕາມ; ແຕ່ມັນມາພ້ອມກັບພະລັງ ອັນຍິ່ງໃຫຍ່ທີ່ສ້າງຄວາມປະທັບໃຈໃຫ້ແກ່ຜູ້ຟັງ. ບໍ່ມີຂໍ້ຂ້ອງໃຈແມ່ນແຕ່ໜ້ອຍດຽວ. ໃນໂອກາດທີ່ພຣະ-ຄຣິສສະເດັດເຂົ້ານະຄອນເຢຣູຊາເລັມຢ່າງມີໄຊ, ປະຊາຊົນຈາກທົ່ວປະເທດທີ່ມາຮ່ວມໃນເທດສະການ ປັດສະຄາ ໄດ້ພາກັນຫຼັ່ງໄຫຼໄປທີ່ພູເຂົາໝາກກອກເທດ, ແລ້ວເມື່ອເຂົ້າຮ່ວມກັບຝູງຊົນທີ່ຕ້ອນຮັບພຣະເຢຊູ ສະເດັດເຂົ້າເມືອງ ພວກເຂົາກໍໄດ້ຮັບແຮງບັນດານໃຈຈາກບັນຍາກາດໃນຂະນະນັ້ນ ແລະ ໄດ້ຮ່ວມຮ້ອງ ສຽງດັງວ່າ: "ຂໍພຣະເຈົ້າອວຍພອນທ່ານຜູ້ທີ່ສະເດັດມາໃນນາມຂອງອົງພຣະຜູ້ເປັນເຈົ້າ!" (ມັດທາຍ 21:9). ໃນທຳນອງດຽວກັນ, ຄົນທີ່ບໍ່ເຊື່ອໄດ້ມາຮ່ວມການປະຊຸມຂອງກຸ່ມແອັດເວັນຕິສ ຄືກຸ່ມຜູ້ເຊື່ອ

[7] ຢູ ເອັສ, ວາລະສານ *Advent Shield and Review*, ເຫຼັ້ມ 1, ໜ້າ 271, ມັງກອນ, 1845.
[8] ຂໍ້ຄວາມນີ້ຂຽນ 40 ກວ່າປີຫຼັງເຫດການທີ່ກຳລັງກ່າວເຖິງ.

ໃນການສະເດັດມາຄັ້ງທີສອງຂອງພຣະຄຣິສ. ບາງຄົນມາຍ້ອນຄວາມຢາກຮູ້ຢາກເຫັນ, ບາງຄົນມາເພື່ອເຍາະເຍີ້ຍເທົ່ານັ້ນ, ແຕ່ທຸກຄົນລ້ວນແຕ່ຮູ້ສຶກເຖິງພະລັງໂນ້ມນ້າວຂອງຄຳເທດສະໜາທີ່ກ່າວວ່າ: “ເຈົ້າບ່າວມາແລ້ວ!” {GC 402.2}

ໃນຕອນນັ້ນ, ຄົນມີຄວາມເຊື່ອໜ້ອຍຈົນຄຳອະທິຖານຂອງພວກເຂົາໄດ້ຮັບຄຳຕອບ, ຄືຄວາມເຊື່ອທີ່ແລເຫັນລາງວັນທີ່ຈະໄດ້ຮັບ (ເບິ່ງ ເຮັບເຣີ 11:26). ເຊັ່ນດຽວກັບສາຍຝົນທີ່ຕົກລົງມາຫົດແຜ່ນດິນທີ່ແຫ້ງແລ້ງ, ພຣະວິນຍານແຫ່ງພຣະຄຸນໄດ້ສະເດັດລົງມາເທິງຜູ້ທີ່ສະແຫວງຫາຄວາມຈິງຢ່າງຫ້າວຫັນ. ຜູ້ທີ່ຄາດຫວັງວ່າ ໃນບໍ່ຊ້ານີ້ຈະໄດ້ຢືນຢູ່ຕໍ່ໜ້າພຣະພັກຂອງພຣະຜູ້ໄຖ່ຂອງຕົນ ໄດ້ຮູ້ສຶກເຖິງຄວາມຊົມຊື່ນຍິນດີທີ່ບໍ່ສາມາດອະທິບາຍໄດ້. ພຣະວິນຍານບໍຣິສຸດຊົງໂນ້ມນ້າວຈິດໃຈຂອງຜູ້ທີ່ຮັບຟັງໃຫ້ອ່ອນລົງ; ພຣະອົງຊົງຖອກເທພຣະພອນຢ່າງຫຼວງຫຼາຍລົງເທິງຜູ້ທີ່ສັດຊື່ ແລະ ເຊື່ອຟັງ. {GC 402.3}

ຜູ້ທີ່ເຊື່ອຕາມຄຳປະກາດນັ້ນໄດ້ລໍຖ້າເວລາທີ່ຄາດຫວັງວ່າຈະໄດ້ພົບອົງພຣະຜູ້ເປັນເຈົ້າຂອງພວກເຂົາດ້ວຍຄວາມສຳລວມ ແລະ ໃຈຈົດໃຈຈໍ່. ທຸກໆເຊົ້າ, ພວກເຂົາຮູ້ສຶກວ່າໜ້າທີ່ສຳຄັນອັນດັບໜຶ່ງຂອງຕົນ ແມ່ນການຟື້ນຟູຄວາມສຳພັນກັບພຣະເຈົ້າຈົນແນ່ໃຈວ່າ ຕົນເປັນທີ່ຍອມຮັບຂອງພຣະອົງ. ຈິດໃຈຂອງກຸ່ມແອັດເວັນຕິສຜູກພັນກັນຢ່າງແໜ້ນແຟ້ນ. ພວກເຂົາໃຊ້ເວລາໃນການອະທິຖານຮ່ວມກັນ ແລະ ເພື່ອກັນແລະກັນ, ແລະພົບກັນຢູ່ສະຖານທີ່ເປົ່າປ່ຽວ ເພື່ອເຂົ້າເຝົ້າພຣະເຈົ້າຢູ່ເລື້ອຍໆ; ສຽງອະທິຖານວິງວອນຂອງພວກເຂົາລອຍຂຶ້ນສູ່ສະຫວັນຈາກທົ່ງຫຍ້າປ່າໄມ້. ຄວາມໝັ້ນໃຈວ່າພຣະຜູ້ໄຖ່ຊົງເຫັນດີນຳພວກເຂົານັ້ນ ສຳຄັນຫຼາຍກວ່າອາຫານປະຈຳວັນ; ແລະຖ້າມີເງົາມືດມາປົກຄຸມຈິດໃຈ, ພວກເຂົາຈະບໍ່ຢຸດພັກຈົນກວ່າຄວາມມືດນັ້ນຈະຈາງຫາຍໄປ. ເມື່ອຮູ້ສຶກເຖິງພຣະຄຸນທີ່ໃຫ້ອະໄພ ພວກເຂົາຢາກເຫັນພຣະອົງຜູ້ທີ່ຕົນຮັກ. {GC 403.1}

ການຮັບມືກັບຄວາມຜິດຫວັງ

ເຖິງຢ່າງໃດກໍຕາມ, ພວກເຂົາຕ້ອງປະສົບກັບຄວາມຜິດຫວັງອີກຄັ້ງ; ເວລາທີ່ພວກເຂົາຄາດຫວັງຜ່ານໄປ ໂດຍພຣະຜູ້ຊ່ວຍໃຫ້ລອດບໍ່ໄດ້ມາປາກົດ. ພວກເຂົາໄດ້ລໍຄອຍການສະເດັດມາຂອງພຣະອົງດ້ວຍຄວາມໝັ້ນໃຈທີ່ບໍ່ຫວັ່ນໄຫວ; ແຕ່ບັດນີ້ກັບຮູ້ສຶກເໝືອນນາງມາຣີ ເມື່ອນາງໄປຫາອຸບມຸງຝັງສົບຂອງພຣະເຢຊູ ແລະ ພົບວ່າມັນຫວ່າງເປົ່າ; ນາງຈຶ່ງຮ້ອງໄຫ້ ແລະ ຮ້ອງອອກມາວ່າ: “ພວກເຂົາໄດ້ເອົາອົງພຣະຜູ້ເປັນເຈົ້າຂອງຂ້ານ້ອຍໄປແລ້ວ ແລະ ຂ້ານ້ອຍບໍ່ຮູ້ຈັກວ່າພວກເຂົາເອົາພຣະອົງໄປໄວ້ຢູ່ໃສ.” (ໂຢຮັນ 20:13 LCV). {GC 403.2}

ຄວາມຮູ້ສຶກຢ້ານກົວວ່າຂ່າວນັ້ນອາດຈະເປັນຄວາມຈິງ ໄດ້ຢັບຢັ້ງຜູ້ທີ່ບໍ່ເຊື່ອຢູ່ຊົ່ວໄລຍະເວລາໜຶ່ງ. ແຕ່ເມື່ອເວລາທີ່ຄາດໝາຍໄວ້ຜ່ານໄປແລ້ວ ຄວາມຢ້ານກົວນັ້ນກໍຍັງບໍ່ໄດ້ຫາຍໄປທັນທີ; ໃນຊ່ວງທຳອິດ, ພວກເຂົາບໍ່ກ້າອວດໄຊຊະນະເໜືອກຸ່ມຄົນທີ່ຜິດຫວັງ. ຢ່າງໃດກໍຕາມ, ເມື່ອບໍ່ເຫັນສັນຍານທີ່ສະແດງເຖິງພຣະພິໂຣດຂອງພຣະເຈົ້າ, ຜູ້ຄົນທີ່ບໍ່ເຊື່ອກໍເຊົາຢ້ານກົວ ແລະ ກັບມາດູໝິ່ນ ແລະ ເຍາະເຍີ້ຍຄືເກົ່າ. ກຸ່ມຄົນຈຳນວນຫຼາຍທີ່ເຄີຍອ້າງວ່າ ເຊື່ອໃນການສະເດັດມາໃນບໍ່ຊ້າຂອງພຣະຄຣິສ ໄດ້ປະຖິ້ມຄວາມເຊື່ອ. ບາງຄົນທີ່ເຄີຍໝັ້ນໃຈຫຼາຍ ກັບຮູ້ສຶກວ່າຕົນໄດ້ເສຍໜ້າຢ່າງໜັກໜ່ວງ ຈົນຢາກໜີໄປຈາກໂລກ. ຄືກັນກັບໂຢນາ, ພວກເຂົາຈົ່ມເຖິງພຣະເຈົ້າ ແລະ ປາຖະໜາຄວາມຕາຍຫຼາຍກວ່າຊີວິດ. ພວກທີ່ຕັ້ງຄວາມເຊື່ອຂອງຕົນໄວ້ເທິງຄວາມຄິດເຫັນຂອງຜູ້ອື່ນ ແລະ ບໍ່ໄດ້ຕັ້ງໄວ້ເທິງພຣະຄຳຂອງພຣະເຈົ້າ ກໍພ້ອມທີ່ຈະປ່ຽນແປງຄວາມຄິດເຫັນຂອງຕົນອີກຄັ້ງ. ພວກທີ່ເຍາະເຍີ້ຍໄດ້ຊັກຈູງຄົນທີ່ອ່ອນແອ ແລະ ຄົນຂີ້ຢ້ານເຂົ້າມາຢູ່ໃນກຸ່ມຂອງຕົນ; ແລ້ວຄົນເຫຼົ່ານີ້ກໍຮ່ວມກັນປະກາດວ່າ ບໍ່ມີເຫດຜົນທີ່ຈະຢ້ານກົວ ຫຼື ຄາດຫວັງອີກຕໍ່ໄປ. ພວກເຂົາເວົ້າວ່າເວລາທີ່ຄາດຄະເນໄວ້ໄດ້ຜ່ານໄປ

ແລ້ວ, ພຣະຜູ້ເປັນເຈົ້າບໍ່ໄດ້ສະເດັດມາ ແລະ ໂລກອາດຈະຍັງຄົງຢູ່ເໝືອນເດີມຕໍ່ໄປອີກຫຼາຍພັນ ປີ. *{GC 403.3}*

ຜູ້ທີ່ເຊື່ອໝັ້ນຢ່າງຈິງໃຈໄດ້ສະຫຼະທຸກຢ່າງເພື່ອພຣະຄຣິສ ແລະ ໄດ້ສຳຜັດເຖິງການສະຖິດຢູ່ນຳຂອງ ພຣະອົງຢ່າງທີ່ບໍ່ເຄີຍມີມາກ່ອນ. ພວກເຂົາເຊື່ອວ່າຕົນໄດ້ປະກາດຄຳຕັກເຕືອນໃຫ້ແກ່ຊາວໂລກເປັນຄັ້ງ ສຸດທ້າຍ ແລະ ຄາດຫວັງວ່າໃນບໍ່ຊ້ານີ້ຈະໄດ້ຢູ່ກັບພຣະເຢຊູ ແລະ ເຫຼົ່າທູດສະຫວັນ, ຈຶ່ງໄດ້ຖອນ ຕົວອອກຫ່າງຈາກສັງຄົມຂອງຜູ້ທີ່ບໍ່ຍອມເຊື່ອຄຳປະກາດນັ້ນເປັນສ່ວນຫຼາຍ ແລະ ອະທິຖານດ້ວຍ ຄວາມປາຖະໜາຢ່າງແຮງກ້າວ່າ: “ຂໍພຣະເຢຊູເຈົ້າສະເດັດມາໂດຍໄວເຖີດ,” ແຕ່ພຣະອົງບໍ່ໄດ້ສະເດັດ ມາ. ບັດນີ້, ການທີ່ຕ້ອງກັບຄືນໄປຮັບເອົາພາລະອັນໜັກໜ່ວງ ແລະ ຄວາມທຸກກັງວົນໃນຊີວິດອີກ ຄັ້ງ, ພ້ອມກັບການທີ່ຕ້ອງອົດທົນຕໍ່ຄຳເຍາะເຍີ້ຍຖາກຖາງ ແລະ ການດູໝິ່ນຈາກຊາວໂລກ ເປັນການ ທົດສອບຄວາມເຊື່ອ ແລະ ຄວາມອົດທົນທີ່ໜັກໜາສາຫັດ. *{GC 404.1}*

ແຕ່ຄວາມຜິດຫວັງນີ້ ຍັງບໍ່ຮຸນແຮງເທົ່າກັບຄວາມຜິດຫວັງຂອງພວກອັກຄະສາວົກຂອງພຣະເຢຊູ-ຄຣິສ. ເມື່ອພຣະເຢຊູຂີ່ໂຕລາສະເດັດເຂົ້ານະຄອນເຢຣູຊາເລັມຢ່າງມີໄຊ, ພວກສາວົກຂອງພຣະອົງເຊື່ອ ວ່າ ພຣະອົງກຳລັງຈະຂຶ້ນຄອງຣາຊບັນລັງຂອງດາວິດ ແລະ ປົດປ່ອຍຊົນຊາດອິດສະຣາເອນອອກ ຈາກການຖືກປົບບັງຄັບ. ທຸກຄົນຕ່າງພະຍາຍາມສະແດງຄວາມຈົງຮັກພັກດີຕໍ່ອົງຣາຊາຂອງພວກເຂົາ ດ້ວຍຄວາມຫວັງອັນແຮງກ້າ ແລະ ຄວາມຊົມຊື່ນຍິນດີ. ຫຼາຍຄົນໄດ້ເອົາເສື້ອຄຸມຂອງຕົນປູລົງຕາມ ທາງສະເດັດຂອງພຣະອົງ ຫຼື ເອົາກ້ານຕານມາປູໄວ້ເບື້ອງໜ້າພຣະອົງ. ພວກເຂົາພ້ອມກັນຮ້ອງ ສັນລະເສີນດ້ວຍຄວາມຊື່ນຊົມຍິນດີຢ່າງເຫຼືອລົ້ນວ່າ: “ໂຮຊັນນາ ແດ່ບຸດຂອງດາວິດ!” ພວກຟາຣີຊາຍ ຮູ້ສຶກຂຸ່ນເຄືອງໃຈ ແລະ ເຄືອດດານຕໍ່ການສະແດງຄວາມຊົມຊື່ນຍິນດີນີ້ ແລະ ຢາກໃຫ້ພຣະເຢຊູ ຫ້າມປາມພວກສາວົກຂອງພຣະອົງ; ພຣະອົງຊົງຕອບວ່າ: “ຖ້າພວກເຂົາມິດງຽບຢູ່ ກ້ອນຫີນທັງຫຼາຍ ກໍຈະເປັ່ງສຽງຮ້ອງຂຶ້ນ.” (ລູກາ 19:40 LCV). ຄຳພະຍາກອນຈະຕ້ອງສຳເລັດເປັນຈິງ. ພວກ ສາວົກກຳລັງເຮັດໃຫ້ພຣະປະສົງຂອງພຣະເຈົ້າສຳເລັດ, ແຕ່ເຖິງຢ່າງນັ້ນ ພວກເຂົາກໍຈະຕ້ອງປະສົບກັບ ຄວາມຜິດຫວັງອັນຂົມຂື່ນ. ບໍ່ພຽງເທົ່າໃດມື້ຕໍ່ມາ, ພວກເຂົາກໍໄດ້ເຫັນການສິ້ນພຣະຊົນອັນເຈັບປວດ ຂອງພຣະຜູ້ຊ່ວຍໃຫ້ລອດ ແລະ ໄດ້ວາງພຣະສົບຂອງພຣະອົງໄວ້ໃນອຸບມຸງ. ຄວາມຄາດຫວັງຂອງ ພວກເຂົາບໍ່ໄດ້ເປັນຈິງແມ່ນແຕ່ໜ້ອຍດຽວ, ຄວາມຫວັງນັ້ນກໍມອດລົງພ້ອມກັບການສິ້ນພຣະຊົນຂອງ ພຣະເຢຊູ. ພວກສາວົກບໍ່ເຂົ້າໃຈວ່າທຸກສິ່ງເປັນໄປຕາມຄຳພະຍາກອນທີ່ວ່າ “ພຣະຄຣິສຕ້ອງທົນ ທຸກທໍລະມານ ແລະ ເປັນຄືນມາຈາກຕາຍ” ຈົນກວ່າພຣະອົງໄດ້ຟື້ນຄືນພຣະຊົນຢ່າງມີໄຊ. (ກິດຈະການ 17:3). *{GC 404.2}*

ຫ້າຮ້ອຍປີກ່ອນ, ພຣະຜູ້ເປັນເຈົ້າໄດ້ປະກາດໂດຍຜ່ານຜູ້ເຜີຍພຣະທຳເຊກາຣີຢາວ່າ: “ຈົ່ງຍິນດີ ເຖີດ ປະຊາຊົນຂອງພູເຂົາຊີໂອນເອີຍ ປະຊາຊົນນະຄອນເຢຣູຊາເລັມ ຈົ່ງໂຮ່ຮ້ອງຍິນດີເຖີດ ຈົ່ງເບິ່ງດູ ວ່າກະສັດຂອງພວກເຈົ້າກຳລັງມາຫາ ເພິ່ນມາຢ່າງຜູ້ມີໄຊ ແລະ ຢ່າງຜູ້ຍຸຕິທຳດ້ວຍ ແຕ່ພັດຖ່ອມຕົວ ລົງມານັ່ງທີ່ເທິງຫຼັງລໍ ຂີ່ລໍນ້ອຍໂຕທີ່ເກີດມາຈາກລໍແມ່.” (ເຊກາຣີຢາ 9:9). ສາເຫດທີ່ພວກສາວົກ ເຮັດໃຫ້ຄຳພະຍາກອນນີ້ສຳເລັດໄດ້ ກໍຍ້ອນວ່າພວກເຂົາບໍ່ໄດ້ເຂົ້າໃຈລ່ວງໜ້າວ່າ ພຣະຄຣິສຈະຖືກ ພິພາກສາ ແລະ ຈະສິ້ນພຣະຊົນ. *{GC 405.1}*

ໃນທຳນອງດຽວກັນ, ມິນເລີ ແລະ ໝູ່ເພື່ອນຂອງເພິ່ນໄດ້ເຮັດໃຫ້ຄຳພະຍາກອນສຳເລັດ. ພວກເຂົາ ໄດ້ປະກາດຂ່າວສານທີ່ພຣະວິນຍານບໍຣິສຸດຊົງດົນໃຈລ່ວງໜ້າໃຫ້ປະກາດແກ່ຊາວໂລກ. ແຕ່ພວກເຂົາ ຄົງບໍ່ສາມາດປະກາດຂ່າວສານນີ້ໄດ້, ຖ້າຫາກວ່າ ພວກເຂົາເຂົ້າໃຈຢ່າງຖ່ອງແທ້ເຖິງຄຳພະຍາກອນ ທັງໝົດ. ຄຳພະຍາກອນດັ່ງກ່າວ ບໍ່ພຽງແຕ່ຊີ້ບອກເຖິງຄວາມຜິດຫວັງຂອງພວກເຂົາເທົ່ານັ້ນ, ແຕ່

ຍັງບອກເຖິງອີກຂ່າວສານໜຶ່ງ ທີ່ຕ້ອງປະກາດໃຫ້ທຸກຊົນຊາດກ່ອນທີ່ອົງພຣະຜູ້ເປັນເຈົ້າຈະສະເດັດ ມາ. ຂ່າວຂອງທູດສະຫວັນອົງທີໜຶ່ງ ແລະ ອົງທີສອງໄດ້ຖືກປະກາດໃນເວລາທີ່ເໝາະສົມ ແລະ ໄດ້ ຜົນສຳເລັດຕາມທີ່ພຣະເຈົ້າຊົງກຳນົດໄວ້. {GC 405.2}

ຊາວໂລກໄດ້ຈ້ອງເບິ່ງຢູ່, ໂດຍຄາດຫວັງວ່າຖ້າເວລາຜ່ານໄປແລ້ວ ແລະ ພຣະຄຣິສຍັງບໍ່ໄດ້ສະເດັດ ມາ, ລະບົບຄຳສອນຂອງຊາວແອັດເວັນຕິສທັງໝົດກໍຈະຖືກປະຖິ້ມ. ແຕ່ເຖິງແມ່ນວ່າ ຫຼາຍຄົນໄດ້ສູນເສຍ ຄວາມເຊື່ອຂອງຕົນພາຍໃຕ້ການທົດລອງອັນໜັກໜ່ວງ, ແຕ່ກໍຍັງມີບາງຄົນທີ່ຢືນຢັດໝັ້ນຄົງ. ຜົນງານ ຂອງຂະບວນການປະກາດຂອງຊາວແອັດເວັນຕິສ ໄດ້ສະແດງອອກໃນຫຼາຍດ້ານຄື: ຄວາມນອບນ້ອມ ຖ່ອມຕົນ, ການສຳຫຼວດຈິດໃຈ, ການປະຖິ້ມທາງໂລກ ແລະ ການປັບປຸງຊີວິດ. ສິ່ງເຫຼົ່ານີ້ໄດ້ ປາກົດຢູ່ໃນວຽກງານການປະກາດຂອງພວກເຂົາ ແລະ ເປັນຫຼັກຖານວ່າ ຂະບວນການນີ້ມາຈາກ ພຣະເຈົ້າ. ພວກເຂົາບໍ່ກ້າປະຕິເສດວ່າ ຣິດອຳນາດຂອງພຣະວິນຍານບໍຣິສຸດໄດ້ເປັນພະຍານໃນການ ປະກາດເລື່ອງການສະເດັດມາຄັ້ງທີສອງຂອງພຣະຄຣິສ ແລະ ກໍບໍ່ສາມາດຊີ້ໃຫ້ເຫັນຂໍ້ຜິດພາດໃນ ການຄຳນວນໄລຍະເວລາຕາມຄຳພະຍາກອນ. ແມ່ນແຕ່ຜູ້ຄັດຄ້ານທີ່ມີຄວາມສາມາດສູງສຸດ ກໍບໍ່ ສາມາດລົ້ມລ້າງລະບົບຂອງພວກເຂົາທີ່ນຳໃຊ້ໃນການຕີຄວາມໝາຍຄຳພະຍາກອນ. ກຸ່ມແອັດເວັນຕິສ ໄດ້ມາເຖິງຈຸດຢືນຂອງຕົນໂດຍຜ່ານການອະທິຖານ ແລະ ການສຶກສາພຣະຄຳພີຢ່າງຈິງຈັງ. ໃນ ຂະບວນການນີ້, ຈິດໃຈຂອງພວກເຂົາໄດ້ຮັບຄວາມສະຫວ່າງຈາກພຣະວິນຍານຂອງພຣະເຈົ້າ ແລະ ມີ ຄວາມກະຕືລືລົ້ນດ້ວຍຣິດອຳນາດອັນມີຊີວິດຂອງພຣະອົງ. ດັ່ງນັ້ນ, ພວກເຂົາຈຶ່ງບໍ່ສາມາດຍອມຮັບ ໄດ້ທີ່ຈະປະຖິ້ມຈຸດຢືນເຫຼົ່ານີ້ ໂດຍປາສະຈາກຫຼັກຖານຈາກພຣະຄຳພີ. ຈຸດຢືນເຫຼົ່ານີ້ໄດ້ຜ່ານການ ວິພາກວິຈານຢ່າງທະລຸທະລວງ ແລະ ການຕໍ່ຕ້ານທີ່ຮຸນແຮງທີ່ສຸດ ຈາກບັນດາອາຈານສອນສາສະໜາ ທີ່ມີຊື່ສຽງ ແລະ ນັກປາດຊາວໂລກ. ຈຸດຢືນເຫຼົ່ານີ້ຍັງຄົງຕັ້ງໝັ້ນຢູ່ ເຖິງແມ່ນວ່າຈະຖືກທ້າທາຍໂດຍ ຄວາມຮູ້ ແລະ ວາທະສິນອັນແຫຼມຄົມຂອງຜູ້ຄົນທີ່ຮວມຕົວກັນຕໍ່ຕ້ານ, ແລະຍັງຄົງຢືນຢັດໄດ້ທ່າມກາງ ການເຍາะເຍີ້ຍ ແລະ ການປະນາມຈາກທັງຄົນທີ່ມີກຽດ ແລະ ຄົນຕ່ຳຕ້ອຍ. {GC 405.3}

ເຖິງແມ່ນວ່າເຫດການບໍ່ໄດ້ເກີດຂຶ້ນຕາມທີ່ຄາດຫວັງໄວ້, ແຕ່ກໍບໍ່ໄດ້ເຮັດໃຫ້ຄວາມເຊື່ອຂອງພວກເຂົາ ທີ່ມີໃນພຣະຄຳຂອງພຣະເຈົ້າສັ່ນຄອນແຕ່ຢ່າງໃດ. ເມື່ອໂຢນາປະກາດຕາມຖະໜົນຫົນທາງຂອງເມືອງ ນີເນເວວ່າ ພາຍໃນສີ່ສິບວັນເມືອງນີ້ຈະຖືກທຳລາຍ, ພຣະເຈົ້າຊົງຍອມຮັບການຖ່ອມຕົວລົງຂອງ ຊາວເມືອງ ແລະ ຊົງຂະຫຍາຍເວລາແຫ່ງພຣະກະລຸນາໃຫ້ພວກເຂົາ. ເຖິງຢ່າງໃດກໍຕາມ, ຄຳທີ່ໂຢນາ ປະກາດກໍມາຈາກພຣະເຈົ້າ ແລະ ເມືອງນີເນເວກໍຖືກທົດສອບຕາມນ້ຳພຣະໄທຂອງພຣະອົງ. ຊາວ ແອັດເວັນຕິສເຊື່ອວ່າ ພຣະເຈົ້າໄດ້ຊົງນຳພາພວກເຂົາໃຫ້ປະກາດເຕືອນເລື່ອງການພິພາກສາໃນລັກສະນະ ດຽວກັນນີ້. ພວກເຂົາກ່າວວ່າ, “ຄຳປະກາດນີ້ໄດ້ທົດສອບຈິດໃຈຂອງທຸກຄົນທີ່ໄດ້ຍິນ. ສຳລັບບາງຄົນ, ເມື່ອໄດ້ຍິນແລ້ວ ກໍເຮັດໃຫ້ເກີດຄວາມຮັກຕໍ່ການສະເດັດມາຂອງພຣະຜູ້ເປັນເຈົ້າ; ແຕ່ສຳລັບຄົນອື່ນ, ມັນ ເຮັດໃຫ້ເກີດຄວາມກຽດຊັງຕໍ່ການສະເດັດມາຂອງພຣະອົງ. ຄວາມກຽດຊັງນີ້ອາດຈະປາກົດຊັດເຈນຫຼືບໍ່ ກໍຕາມ ແຕ່ພຣະເຈົ້າຊົງເຫັນ. ຄຳປະກາດນີ້ໄດ້ຂີດເສັ້ນແບ່ງ; . . . ມັນເຮັດໃຫ້ຜູ້ຄົນສຳຫຼວດຈິດໃຈຂອງ ຕົນເອງ. ດ້ວຍວິທີນີ້, ພວກເຂົາສາມາດຮູ້ວ່າຕົນຈະຢູ່ຝ່າຍໃດ ຖ້າພຣະຜູ້ເປັນເຈົ້າສະເດັດມາໃນເວລາທີ່ໄດ້ ປະກາດໄວ້. ພວກເຂົາຈະຮູ້ວ່າຕົນຈະເປັນຄົນໜຶ່ງຫຼືບໍ່ທີ່ຮ້ອງອອກມາວ່າ: ‘ເບິ່ງແມ! ນີ້ແມ່ນພຣະເຈົ້າຂອງ ພວກເຮົາ, ພວກເຮົາໄດ້ລໍຄອຍພຣະອົງ ແລະ ພຣະອົງຈະຊ່ວຍພວກເຮົາໃຫ້ລອດ.’ ຫຼືວ່າຈະຢູ່ໃນຈຳນວນ ຄົນທີ່ຮ້ອງຂໍໃຫ້ກ້ອນຫີນ ແລະ ພູເຂົາລົ້ມທັບຕົນ ເພື່ອບັງຕົວໃຫ້ພົ້ນຈາກພຣະພັກຂອງພຣະອົງທີ່ປະທັບ ເທິງບັນລັງ ແລະ ຈາກພຣະພິໂຣດຂອງພຣະເມສານ້ອຍ. ພວກເຮົາເຊື່ອວ່າ ພຣະເຈົ້າໄດ້ທົດສອບຄົນ ຂອງພຣະອົງດ້ວຍວິທີນີ້, ທັງໄດ້ຊົງທົດສອບຄວາມເຊື່ອຂອງພວກເຂົາ ແລະ ພິສູດພວກເຂົາວ່າ ໃນຍາມ

ຍາກລຳບາກ ພວກເຂົາຈະຍັງຄົງຢືນຢູ່ໃນຕຳແໜ່ງທີ່ພຣະອົງມອບໃຫ້ຫຼືບໍ່. ນອກຈາກນັ້ນ, ພຣະອົງໄດ້ເຫັນວ່າພວກເຂົາຈະປະຖິ້ມທາງຝ່າຍໂລກ ແລະ ເຊື່ອໝັ້ນໃນພຣະຄຳຂອງພຣະເຈົ້າຢ່າງສຸດໃຈຫຼືບໍ່."[9] *{GC 406.1}*

ວິນລຽມ ມິນເລີ ໄດ້ສະແດງຄວາມຮູ້ສຶກຂອງຜູ້ທີ່ຍັງເຊື່ອວ່າ ພຣະເຈົ້າໄດ້ນຳພາພວກເຂົາໃນປະສົບການທີ່ຜ່ານມາວ່າ: "ຖ້າຂ້າພະເຈົ້າສາມາດຍ້ອນອະດີດ ແລະ ເລີ່ມຊີວິດໃໝ່ອີກຄັ້ງ ແລະ ມີຂໍ້ມູນແບບດຽວກັນກັບທີ່ມີໃນຊີວິດນີ້, ຂ້າພະເຈົ້າກໍຈະດຳເນີນທຸກຢ່າງເໝືອນທີ່ໄດ້ເຮັດຜ່ານມາ ເພື່ອຮັກສາຄວາມສັດຊື່ຕໍ່ພຣະເຈົ້າ ແລະ ເພື່ອນມະນຸດ." "ຂ້າພະເຈົ້າຫວັງວ່າໄດ້ເຮັດໜ້າທີ່ສຳເລັດ ໂດຍພົ້ນຈາກຄວາມຮັບຜິດຊອບໃນການພິນາດຂອງຄົນອື່ນ ແລະ ເຊື່ອວ່າ: ຂ້າພະເຈົ້າໄດ້ເຮັດທຸກຢ່າງເທົ່າທີ່ເຮັດໄດ້ແລ້ວໃນເລື່ອງນີ້." ຜູ້ຮັບໃຊ້ຂອງພຣະເຈົ້າຜູ້ນີ້ໄດ້ຂຽນວ່າ: "ເຖິງແມ່ນວ່າຂ້າພະເຈົ້າໄດ້ຜິດຫວັງສອງຄັ້ງແລ້ວກໍຕາມ, ແຕ່ຂ້າພະເຈົ້າກໍຍັງບໍ່ທໍ້ຖອຍ ຫຼື ໝົດກຳລັງໃຈ.... ຄວາມຫວັງຂອງຂ້າພະເຈົ້າໃນການສະເດັດມາຂອງພຣະຄຣິສກໍຍັງໝັ້ນຄົງເໝືອນເດີມ. ຫຼັງຈາກໄຕ່ຕອງຢ່າງຖີ່ຖ້ວນເປັນເວລາຫຼາຍປີ, ຂ້າພະເຈົ້າໄດ້ເຮັດພຽງແຕ່ສິ່ງທີ່ຮູ້ສຶກວ່າເປັນໜ້າທີ່ອັນສຳຄັນຂອງຕົນ. ຖ້າຂ້າພະເຈົ້າໄດ້ເຮັດຜິດພາດ, ກໍເປັນເພາະຄວາມເມດຕາ, ຄວາມຮັກຕໍ່ເພື່ອນມະນຸດ ແລະ ຄວາມຮູ້ສຶກວ່າເປັນໜ້າທີ່ທີ່ຕ້ອງເຮັດເພື່ອພຣະເຈົ້າ." "ມີສິ່ງໜຶ່ງທີ່ຂ້າພະເຈົ້າຮູ້ແນ່ນອນ, ຂ້າພະເຈົ້າບໍ່ໄດ້ປະກາດສິ່ງອື່ນໃດນອກຈາກສິ່ງທີ່ຂ້າພະເຈົ້າເຊື່ອ ແລະ ພຣະເຈົ້າຊົງຢູ່ນຳຂ້າພະເຈົ້າ; ຣິດອຳນາດຂອງພຣະອົງໄດ້ປາກົດໃຫ້ເຫັນໃນວຽກງານນີ້ ແລະ ໄດ້ເກີດໝາກຜົນອັນໃຫຍ່ຫຼວງ." "ເທົ່າທີ່ເຫັນໄດ້, ການປະກາດເລື່ອງເວລາແຫ່ງການສະເດັດມານັ້ນ ໄດ້ນຳພາຫຼາຍພັນຄົນໃຫ້ສຶກສາພຣະຄຳພີ; ແລະດ້ວຍວິທີນີ້, ຜ່ານຄວາມເຊື່ອ ແລະ ການຊຳລະດ້ວຍພຣະໂລຫິດຂອງພຣະຄຣິສ, ພວກເຂົາໄດ້ກັບຄືນດີກັບພຣະເຈົ້າ."[10] "ຂ້າພະເຈົ້າບໍ່ເຄີຍພະຍາຍາມເອົາໃຈຄົນທີ່ຈອງຫອງ ຫຼື ຫວັ່ນໄຫວເມື່ອສັງຄົມໂລກບໍ່ພໍໃຈ. ຂ້າພະເຈົ້າຈະບໍ່ເອົາໃຈພວກເຂົາເພື່ອເປັນທີ່ຍອມຮັບ ແລະ ຈະບໍ່ຍົວະໃຫ້ພວກເຂົາກຽດຊັງ, ນອກຈາກຄວາມກຽດຊັງທີ່ເກີດຈາກການປະຕິບັດຕໍ່ໜ້າທີ່. ຂ້າພະເຈົ້າຈະບໍ່ຂໍຊີວິດຈາກພວກເຂົາ; ໃນຂະນະດຽວກັນ, ກໍຫວັງວ່າຈະບໍ່ຖອຍໜີ ຖ້າຕ້ອງສະຫຼະຊີວິດຕາມແຜນການອັນດີຂອງພຣະເຈົ້າ."[11] *{GC 406.2}*

ພຣະເຈົ້າບໍ່ປະຖິ້ມຜູ້ທີ່ລໍຄອຍພຣະອົງ

ພຣະເຈົ້າບໍ່ໄດ້ປະຖິ້ມໄພ່ພົນຂອງພຣະອົງ; ພຣະວິນຍານຂອງພຣະອົງຍັງຄົງສະຖິດຢູ່ກັບຜູ້ທີ່ບໍ່ໄດ້ດ່ວນປະຕິເສດຄວາມສະຫວ່າງທີ່ພວກເຂົາໄດ້ຮັບ ແລະ ບໍ່ໄດ້ກ່າວໂທດຂະບວນການການປະກາດເລື່ອງການສະເດັດມາຂອງພຣະຄຣິສ. ອາຈານໂປໂລໄດ້ບັນທຶກຖ້ອຍຄຳທີ່ໜຸນໃຈ ແລະ ຕັກເຕືອນໄວ້ໃນພຣະທຳເຮັບເຣີສຳລັບຜູ້ທີ່ຖືກທົດສອບ ແລະ ກຳລັງລໍຖ້າໃນຊ່ວງວິກິດນີ້ ໂດຍມີໃຈຄວາມວ່າ: "ດັ່ງນັ້ນ ຢ່າໄດ້ປະຖິ້ມຄວາມໝັ້ນໃຈຂອງພວກເຈົ້າ ເພາະສິ່ງນັ້ນນຳໄປສູ່ບຳເໜັດອັນຍິ່ງໃຫຍ່. ພວກເຈົ້າຈຳເປັນຕ້ອງມີຄວາມອົດທົນ ເພື່ອວ່າເມື່ອໄດ້ເຮັດຕາມນ້ຳພຣະໄທຂອງພຣະເຈົ້າແລ້ວ ກໍຈະໄດ້ຮັບຕາມທີ່ພຣະອົງໄດ້ຊົງສັນຍາໄວ້. ເພາະມີຄຳຂຽນໄວ້ໃນພຣະຄຳພີວ່າ, 'ອີກບໍ່ດົນ ບໍ່ນານເທົ່າໃດ ພຣະອົງຜູ້ທີ່ຈະສະເດັດມາກໍຈະສະເດັດມາ ແລະ ຈະບໍ່ຊັກຊ້າ. ແຕ່ຄົນຊອບທຳຂອງເຮົາຈະມີຊີວິດຢູ່ດ້ວຍຄວາມເຊື່ອ; ຖ້າຄົນ

[9] ວາລະສານ *The Advent Herald and Signs of the Times Reporter*, ເຫຼັ້ມ 8, ສະບັບທີ 14, (13 ພະຈິກ 1844).

[10] ຢູ໊ສ, ໜ້າ 256, 255, 277, 280, 281.

[11] ເຈມສ໌ ໄວທ໌ (James White), *ຊີວະປະຫວັດຂອງ ວິນລຽມ ມິນເລີ*, ໜ້າ 315.

ໃດຫາກຫຼົບຖອຍຫຼັງ ເຮົາຈະບໍ່ພໍໃຈໃນຄົນນັ້ນ.' ສ່ວນພວກເຮົາ ບໍ່ຢູ່ຝ່າຍຄົນທີ່ຫຼົບຖອຍຫຼັງ ຈົນເຖິງ ຄວາມຈິບຫາຍເສຍ ແຕ່ຢູ່ຝ່າຍຄົນທີ່ມີຄວາມເຊື່ອ ຈຶ່ງຮັກສາຊີວິດ ແລະ ຈິດໃຈຂອງຕົນໄວ້ໃຫ້ພົ້ນ ໄດ້." (ເຮັບເຣີ 10:35–39). *{GC 407.1}*

ເຮົາຈະເຫັນໄດ້ຢ່າງຈະແຈ້ງວ່າ ຄຳຕັກເຕືອນນີ້ແມ່ນສຳລັບຄຣິສຕະຈັກໃນຍຸກສຸດທ້າຍ ເພາະມັນ ເວົ້າເຖິງການສະເດັດມາຂອງອົງພຣະຜູ້ເປັນເຈົ້າທີ່ໃກ້ຈະມາເຖິງ: "ໃນອີກບໍ່ດົນ, ພຣະອົງຜູ້ທີ່ກຳລັງ ມາກໍຈະມາເຖິງ ແລະ ຈະບໍ່ຊັກຊ້າ." ໃນຄຳພະຍາກອນນີ້ ຍັງກ່າວຢ່າງຊັດເຈນວ່າ ຄົນທີ່ລໍຄອຍຈະ ຮູ້ສຶກວ່າເວລາທີ່ພຣະຄຣິສຈະປາກົດນັ້ນມີຄວາມຊັກຊ້າ ເໝືອນວ່າພຣະອົງມີການລໍຊ້າໃນການສະເດັດ ມາ. ຄຳສອນນີ້ເໝາະສົມເປັນພິເສດກັບປະສົບການຂອງຊາວແອັດເວັນຕິສ ຜູ້ລໍຄອຍການສະເດັດ ມາໃນເວລານັ້ນ. ຄຳພະຍາກອນນີ້ຂຽນໄວ້ເພື່ອຜູ້ທີ່ລໍຄອຍເຫຼົ່ານັ້ນຈະບໍ່ສູນເສຍຄວາມເຊື່ອເໝືອນດັ່ງ ເຮືອທີ່ອັບປາງຢູ່ໃນທະເລ. ຊາວແອັດເວັນຕິສໄດ້ເຮັດຕາມນ້ຳພຣະໄທຂອງພຣະເຈົ້າ ໂດຍການເຊື່ອຟັງ ການຊົງນຳຂອງພຣະວິນຍານ ແລະ ການປະຕິບັດຕາມພຣະຄຳພີ, ແຕ່ພວກເຂົາບໍ່ສາມາດເຂົ້າໃຈ ພຣະປະສົງຂອງພຣະອົງໃນປະສົບການຂອງພວກເຂົາທີ່ຜ່ານມາ, ທັງບໍ່ສາມາດເຫັນຫົນທາງທີ່ຈະກ້າວ ເດີນໄປຂ້າງໜ້າ; ພວກເຂົາຈຶ່ງຖືກທົດລອງໃຫ້ສົງໄສວ່າ ພຣະເຈົ້າຊົງນຳພາພວກເຂົາຢ່າງແທ້ຈິງຫຼືບໍ່. ໃນ ເວລານັ້ນ ຖ້ອຍຄຳທີ່ກ່າວວ່າ "ຄົນຊອບທຳຂອງເຮົາຈະດຳເນີນຊີວິດໂດຍຄວາມເຊື່ອ" ນັ້ນເໝາະສົມ ເປັນຢ່າງຍິ່ງ. ເມື່ອແສງສະຫວ່າງອັນເຈີດຈ້າຂອງ "ສຽງຮ້ອງປະກາດຍາມທ່ຽງຄືນ" ໄດ້ສ່ອງມາເທິງ ຫົນທາງຂອງພວກເຂົາ ແລະ ພວກເຂົາໄດ້ເຂົ້າໃຈຄຳພະຍາກອນ ແລະ ໄດ້ເຫັນໝາຍສຳຄັນຕ່າງໆ ທີ່ສຳເລັດຢ່າງໄວວາ (ເຊິ່ງໝາຍສຳຄັນເຫຼົ່ານັ້ນໄດ້ບົ່ງບອກວ່າ ການສະເດັດມາຂອງພຣະຄຣິສໃກ້ເຂົ້າ ມາແລ້ວ), ສິ່ງເຫຼົ່ານີ້ເຮັດໃຫ້ພວກເຂົາແທບຈະບໍ່ຕ້ອງອາໄສຄວາມເຊື່ອ ແຕ່ໄດ້ດຳເນີນຊີວິດເໝືອນກັບ ວ່າໄດ້ເຫັນດ້ວຍຕາຕົນເອງ. ແຕ່ບັດນີ້, ເມື່ອຮູ້ສຶກທໍ້ຖອຍຍ້ອນຄວາມຜິດຫວັງ ກໍມີແຕ່ຄວາມເຊື່ອໃນ ພຣະເຈົ້າ ແລະ ໃນພຣະຄຳຂອງພຣະອົງເທົ່ານັ້ນ ທີ່ສາມາດຄ້ຳຊູພວກເຂົາໄວ້ໄດ້. ໃນຕອນນັ້ນ, ຊາວໂລກ ກຳລັງເຍາะເຍີ້ຍວ່າ: "ພວກເຈົ້າຖືກຫຼອກລວງແລ້ວ; ຈົ່ງປະຖິ້ມຄວາມເຊື່ອຂອງພວກເຈົ້າເສຍ, ແລ້ວ ຍອມຮັບວ່າ ຂະບວນການປະກາດການສະເດັດມານັ້ນມາຈາກຊາຕານ." ແຕ່ພຣະຄຳຂອງພຣະເຈົ້າ ກ່າວວ່າ: "ເຮົາຈະບໍ່ພໍໃຈໃນຄົນທີ່ຫຼົບຖອຍຫຼັງ." ຖ້າຫາກວ່າພວກເຂົາໄດ້ປະຖິ້ມຄວາມເຊື່ອໃນຕອນ ນັ້ນ ແລະ ປະຕິເສດຣິດອຳນາດຂອງພຣະວິນຍານບໍຣິສຸດທີ່ສະຖິດຢູ່ກັບການປະກາດ ກໍຈະເປັນການ ຫຼົບຖອຍຫຼັງກັບໄປສູ່ຄວາມຈິບຫາຍ. ພວກເຂົາໄດ້ຮັບກຳລັງໃຈໃຫ້ຍືນຢັດໝັ້ນຄົງຈາກຖ້ອຍຄຳຂອງ ອາຈານໂປໂລທີ່ກ່າວວ່າ: "ດັ່ງນັ້ນ ຢ່າໄດ້ປະຖິ້ມຄວາມໝັ້ນໃຈຂອງພວກເຈົ້າ;" "ພວກເຈົ້າທັງຫຼາຍ ຈຳເປັນຕ້ອງມີຄວາມອົດທົນ;" "ເພາະວ່າ, ໃນອີກບໍ່ດົນ, ພຣະອົງຜູ້ທີ່ກຳລັງມາກໍຈະມາເຖິງ ແລະ ຈະ ບໍ່ຊັກຊ້າ." ທາງດຽວທີ່ປອດໄພສຳລັບພວກເຂົາ ແມ່ນການຖະໜອມຮັກສາແສງສະຫວ່າງທີ່ພຣະເຈົ້າ ປະທານໃຫ້ແລ້ວ, ຍຶດໝັ້ນໃນພຣະສັນຍາຂອງພຣະອົງ, ສືບຕໍ່ຄົ້ນຄວ້າພຣະຄຳພີ ແລະ ລໍຖ້າດ້ວຍ ຄວາມອົດທົນ ພ້ອມທັງເຝົ້າຄອຍທີ່ຈະໄດ້ຮັບແສງສະຫວ່າງເພີ່ມ. *{GC 408.1}*

23

“ສະຖານບໍຣິສຸດ” ແມ່ນຫຍັງ?

ຄົ້ນຫາຄວາມຈິງໃນພຣະຄຳພີ

ຂໍ້ພຣະຄຳພີທີ່ເໜືອສິ່ງອື່ນໃດເປັນທັງພື້ນຖານ ແລະ ເສົາຫຼັກຂອງຄວາມເຊື່ອເລື່ອງການສະເດັດມາຄັ້ງທີສອງຂອງພຣະຄຣິສຫຼາຍກວ່າຂໍ້ອື່ນໆ ແມ່ນຄຳປະກາດທີ່ວ່າ: “ຢູ່ມາ 2,300 ວັນ ແລ້ວ ສະຖານບໍຣິສຸດນັ້ນຈະໄດ້ຮັບການຊຳລະ.” (ດານີເອນ 8:14 ດັດແປງຈາກສະບັບ TKJV). ຖ້ອຍຄຳເຫຼົ່ານີ້ເປັນຄຳທີ່ລຶ້ງເຄີຍສຳລັບທຸກຄົນທີ່ເຊື່ອວ່າ ອົງພຣະຜູ້ເປັນເຈົ້າຈະສະເດັດມາໃນອີກບໍ່ດົນ. ຫຼາຍພັນຄົນໄດ້ເອົາຄຳພະຍາກອນນີ້ ເປັນຄຳຂວັນປະຈຳຄວາມເຊື່ອຂອງຕົນ ແລະ ໄດ້ເວົ້າຕໍ່ໆກັນຈາກຄົນສູ່ຄົນ. ທຸກຄົນຮູ້ສຶກວ່າຄວາມຫວັງອັນແຮງກ້າທີ່ສຸດ ແລະ ຄວາມປາຖະໜາອັນເລິກເຊິ່ງທີ່ສຸດຂອງພວກເຂົາ ແມ່ນຂຶ້ນຢູ່ກັບເຫດການທີ່ໄດ້ທຳນວາຍໄວ້ໃນຄຳພະຍາກອນດັ່ງກ່າວ. ໄລຍະເວລາແຫ່ງຄຳພະຍາກອນນີ້ໄດ້ມີຄວາມຄົບບໍຣິບູນໃນລະດູໃບໄມ້ຫຼົ່ນຂອງປີ 1844. ເຊັ່ນດຽວກັນກັບຄຣິສຕຽນກຸ່ມອື່ນໆ, ຊາວແອັດເວັນຕິສໃນຕອນນັ້ນເຊື່ອວ່າໂລກ ຫຼື ບາງສ່ວນຂອງໂລກ ເປັນສະຖານບໍຣິສຸດທີ່ຄຳພະຍາກອນກ່າວເຖິງ. ພວກເຂົາເຂົ້າໃຈວ່າການຊຳລະສະຖານບໍຣິສຸດນັ້ນ ໝາຍເຖິງການຊຳລະລ້າງໂລກດ້ວຍໄຟໃນວັນສຸດທ້າຍ; ແລະເຊື່ອວ່າ ເຫດການນີ້ຈະເກີດຂຶ້ນເມື່ອພຣະຄຣິສສະເດັດມາຄັ້ງທີສອງ. ດ້ວຍເຫດນີ້, ພວກເຂົາຈຶ່ງສະຫຼຸບວ່າ ພຣະຄຣິສຈະສະເດັດກັບມາໃນປີ 1844. *{GC 409.1}*

ແຕ່ເມື່ອເວລາທີ່ກຳນົດໄວ້ໄດ້ຜ່ານໄປ, ອົງພຣະຜູ້ເປັນເຈົ້າກໍບໍ່ໄດ້ສະເດັດມາ. ຜູ້ທີ່ເຊື່ອຮູ້ວ່າພຣະຄຳຂອງພຣະເຈົ້າເປັນຄວາມຈິງແນ່ນອນ, ດັ່ງນັ້ນ, ການຕີຄວາມໝາຍຂອງຄຳພະຍາກອນຂອງພວກເຂົາຕ້ອງມີຄວາມຜິດພາດ, ແຕ່ຂໍ້ຜິດພາດນັ້ນຢູ່ບ່ອນໃດ? ຫຼາຍຄົນໄດ້ແກ້ບັນຫາຢ່າງບໍ່ຮອບຄອບ ໂດຍການປະຕິເສດວ່າໄລຍະເວລາ 2,300 ວັນດັ່ງກ່າວໄດ້ສິ້ນສຸດລົງໃນປີ 1844[1]. ບໍ່ມີເຫດຜົນອື່ນສຳລັບການປະຕິເສດນີ້ ນອກຈາກວ່າອົງພຣະຄຣິສບໍ່ໄດ້ສະເດັດມາໃນເວລາທີ່ພວກເຂົາຄາດຫວັງໄວ້. ພວກເຂົາໂຕ້ຖຽງວ່າ ຖ້າໄລຍະເວລາແຫ່ງຄຳພະຍາກອນໄດ້ສິ້ນສຸດລົງໃນປີ 1844 ແລ້ວ, ພຣະຄຣິສກໍຄວນສະເດັດກັບມາ ເພື່ອຊຳລະສະຖານບໍຣິສຸດ ໂດຍການຊຳລະລ້າງໂລກດ້ວຍໄຟ; ແລະເນື່ອງຈາກພຣະອົງບໍ່ໄດ້ສະເດັດມາ, ສະນັ້ນ, ກໍເປັນໄປບໍ່ໄດ້ທີ່ຄຳພະຍາກອນດັ່ງກ່າວໄດ້ສິ້ນສຸດລົງແລ້ວ. *{GC 409.2}*

ການ ຍອມຮັບ ຂໍ້ ສະຫຼຸບ ນີ້ ເທົ່າ ກັບ ເປັນ ການ ປະຕິເສດ ວິທີການ ຄຳນວນ ໄລຍະ ເວລາ ແຫ່ງ ຄຳ ພະຍາກອນທີ່ພວກເຂົາເຄີຍນຳໃຊ້ກ່ອນໜ້ານັ້ນ. ພວກເຂົາໄດ້ພົບວ່າໄລຍະເວລາ 2,300 ວັນນັ້ນ ເລີ່ມຕົ້ນເມື່ອພຣະບັນຊາຂອງກະສັດອາກຕາເຊເຊັດໃຫ້ບູລະນະ ແລະ ສ້າງນະຄອນເຢຣູຊາເລັມຂຶ້ນໃໝ່ ເຊິ່ງມີຜົນບັງຄັບໃຊ້ໃນລະດູໃບໄມ້ຫຼົ່ນຂອງປີ 457 ກ່ອນ ຄ.ສ. ເມື່ອເລີ່ມຕົ້ນຈາກຈຸດນີ້, ທຸກຢ່າງທີ່ພະຍາກອນໄວ້ໃນດານີເອນ 9:25–27 ສາມາດອະທິບາຍໄດ້ຢ່າງສອດຄ່ອງກັນ. ໄລຍະເວລາ 69 ອາທິດ (ກໍຄື 483 ປີ

[1] ໜຶ່ງວັນແຫ່ງຄຳພະຍາກອນເທົ່າກັບໜຶ່ງປີ. ເບິ່ງ ຈົດບັນຊີ 14:34; ເອເຊກຽນ 4:6.

ทำอิดของคำพะยากอน 2,300 ปี) สิ้นสุดลงที่พระเมสิอา ผู้ที่ถูกเจิมไว้. พระคริสได้รับบับติสะมา และ ถูกเจิมตั้งด้วยพระวิญญาณบริสุทในปี ค.ส. 27, เชิ่งสำเล็ด ตามคำพะยากอนย่างถูกต้องทุกประการ. ในช่วงเค่ิงกางของอาทิดที 70, พระเมสิอา จะ "ถูกตัดออก." (ดานิเอน 9:26 TKJV). พระเมสิอากคือพระคริสนั้นเอง, สามปิเค่ิง ซังจากการรับบับติสะมา, พระองกกถูกคึงที่ไม้กางแขนในละดูใบไม้ป่งปิ ค.ส. 31. เจ็ดสิบอาทิด ซือ 490 ปี แม่นกำนิดไว้สำลับชาวยิวโดยสะเพาะ. เมื่อไลยะเวลานี้สิ้นสุดลง, ชิ่นชาดยิวได้ปะติเสดพระคริสย่างเด็ดขาด โดยการฆ่เห้งพวกสาวกของพระองก; ในเวลานั้น, พวกอักคะสาวกซ้นไปประกาดแก่คนต่างชาด, เชิ่งกงกับปี ค.ส. 34. เมื่อ 490 ปี ทำอิดของ 2,300 ปีผ่านไป, กยังเหลืออีก 1,810 ปี. เมื่อเอา ค.ส. 34 บวกกับ 1,810 ปีกเท่ากับปี 1844. ทูดสะหวันกล่าวว่า, "แล้วสะถานบริสุดนั้น จะได้รับการชำละ." ก่อนที่จะเถิงจุดนี้, ลายละอยดทุกย่างของคำพะยากอนได้สำเล็ดลงย่างบ่มีข้สงไส ตามเวลาที่กำนิดไว้. *{GC 410.1}*

โดยการคำนวนไลยะเวลาแห่งการทำนวายแบบนี้, ทุกสิ่งกปากดชัดเจน และ สอดค่องกัน, ยกเว้นแต่บ่ปากดว่า มิเหดการใดเกิดขึ้นในปี 1844 ที่กงกันกับการชำละสะถานบริสุด. การปะติเสดว่าไลยะเวลาดั่งกล่าวสิ้นสุดลงในปี 1844 กเท่ากับเร็ดใช้วิธีการตีความหมายทังหมดเกิดความสับสินอุ้นวาย และ เป้นการปะถิ้มความเข้าใจที่ได้รับการพิสูด โดยคำพะยากอนที่สำเล็ดแล้วอย่างจะแจ้งแม่นอน. *{GC 410.2}*

อย่างใดกตาม, พระเจ้าชีวเป้นผู้นำไพ่พ้นของพระองก ในขะบวนการอันยิ่งใหย่ แห่งการประกาดการสะเด็ดมาของพระคริสะ; ธิดอำนาด และ สะหง่าธาสีของพระองกอยู่กับวงกางานนี้; พระองกจะบ่ปะใช้การประกาดเลื่องการสะเด็ดมาจบลงในความมืดม้น และ ความสิ้นหวัง, เชิ่งจะเป้นเหดใช้คนกล่าวหาว่าการประกาดนั้น เกิดจากความดั่งได้สาสะหนา และ บ่มีมูนความจิง. พระองกจะบ่ปะปล่อยใช้พระคำของพระองกถูกบิดเบือนย้อนความสงไส ซือ ย้อนความคุมเคือองันบ่แม่นอน. เถิงแม่นว่า ซายคนได้ปะถิ้มการคำนวนไลยะเวลาตามคำพะยากอนที่เคียเชื่อถือมาก่อน และ ปะติเสดความถูกต้องของขะบวนการที่อิงใส่การคำนวนนั้น, คนอื่นๆบ่ยอมปะถิ้มซักความเชื่อ และ ปะสบการที่ได้รับการยืนยันโดยพระคำพี และ การเป้นพะยานของพระวิญญาณบริสุด. พวกเขาเชื่อว่า ได้นำใช้ซักการตีความหมายที่ถูกต้องในการสึกสาคำพะยากอน; และเชื่อว่า พวกต้นมีหน้าที่ในการยึดหนั้นในความจิงที่ได้ฮยนรู้มาแล้ว พ้อมทังสืบต่อการค้นคว้าพระคำพีในแนวทางดงวกัน. พวกเขาอะทิถานย่างจิงจัง, ทบทวนจุดยืนของต้น และ สึกสาพระคำพีเพื่อค้นหาข้ผิดพาด. เมื่อบ่พ้บข้ผิดพาดในการคำนวนไลยะเวลาตามคำพะยากอน, พวกเขาจึ่งหันมาสึกสาเลื่องสะถานนะมัดสะการ ซือ สะถานบริสุดใช้ละอยดยิ่งขึ้น. *{GC 410.3}*

ในการค้นคว้านั้น, พวกเขาได้พ้บว่าบ่มีซักถานในพระคำพีที่สะหนับสะหนุนมุมมองของคนทั่วไปว่า โลกเป้นสะถานบริสุดตามที่คำพะยากอนกล่าวเถิง, แต่พวกเขากับพ้บคำอะทิบายย่างค้บถ้วนในพระคำพีกง่วกับสะถานนะมัดสะการ พ้อมด้วยรูบร่างลักสะนะ, สะถานที่ตั้ง และ พิทีการต่างๆของสะถานนะมัดสะการดั่งกล่าว. ถ้อยคำของผู้ชวนพระคำพีชัดเจน และ ค้บถ้วนพงงพ่จ้บบ่มีข้สงไส. อาจานโปโลชวนในพระทำเร็บเธิ่ว่า: "เถิงแม่นพันทะสันยาเดิมนั้น กมีกดในการนะมัดสะการ และ มีสะถานที่สักสิดที่แผ่นดินโลก.

ດ້ວຍວ່າ, ມີຫໍເຕັນສັກສິດທີ່ຈັດຕັ້ງຂຶ້ນແລ້ວ ຄືຫ້ອງຊັ້ນນອກ ເຊິ່ງມີຕັກຕະກຽງ ມີໂຕ๊ະ ແລະ ມີເຂົ້າຈີ່ທີ່ຕັ້ງຖວາຍໄວ້ ຫ້ອງທຳອິດນີ້ເອີ້ນວ່າ, ສະຖານທີ່ສັກສິດ. ພາຍໃນຜ້າກັ້ງຊັ້ນທີສອງມີຫ້ອງ ເຊິ່ງເອີ້ນວ່າ ສະຖານທີ່ສັກສິດທີ່ສຸດ. ໃນຫ້ອງນັ້ນ ມີແທ່ນຄຳສຳລັບເຜົາເຄື່ອງຫອມ ມີຫີບຫຸ້ມຫໍ່ດ້ວຍຄຳທຸກດ້ານສຳລັບໃສ່ພັນທະສັນຍາ ຢູ່ໃນຫີບນັ້ນມີຂັນຄຳໃສ່ມານາໄວ້ ມີໄມ້ຄ້ອນເທົ້າຂອງອາໂຣນທີ່ປົ່ງຍອດ ແລະ ມີແຜ່ນຫີນຈາລຶກພັນທະສັນຍາແລ້ວ. ຢູ່ເທິງຫີບນັ້ນ ມີຮູບເຄຣຸບປະກອບດ້ວຍສະຫງ່າຣາສີອັນຮຸ່ງເຮືອງຂອງພຣະເຈົ້າ ປົກຄຸມພຣະທີ່ນັ່ງອັນຊົ່ວພຣະກະລຸນານັ້ນ." (ເຮັບເຣີ 9:1–5). *{GC 411.1}*

ສະຖານນະມັດສະການທີ່ອາຈານໂປໂລກ່າວເຖິງໃນຂໍ້ນີ້ ແມ່ນຫໍເຕັນສັກສິດທີ່ໂມເຊສ້າງຂຶ້ນຕາມພຣະບັນຊາຂອງພຣະເຈົ້າ ເພື່ອເປັນບ່ອນປະທັບຢູ່ໃນໂລກໃຫ້ກັບພຣະເຈົ້າຜູ້ຊົ່ວຣິດທານຸພາບສູງສຸດ. ພຣະເຈົ້າຊົ່ວບັນຊາໂມເຊໃນຂະນະທີ່ເພິ່ນຢູ່ກັບພຣະອົງເທິງພູເຂົາວ່າ: "ຊາວອິດສະຣາເອນຕ້ອງສ້າງຫໍເຕັນສັກສິດສຳລັບເຮົາ ເພື່ອວ່າເຮົາຈະຢູ່ທ່າມກາງພວກເຂົາ." (ອົບພະຍົບ 25:8). ໃນຂະນະນັ້ນ, ຊາວອິດສະຣາເອນກຳລັງເດີນທາງຜ່ານຖິ່ນແຫ້ງແລ້ງກັນດານ, ຫໍເຕັນສັກສິດຈຶ່ງຖືກອອກແບບໃຫ້ສາມາດນ້ຳ ແລະ ປະກອບຄືນໃໝ່ເພື່ອສະດວກໃນການເຄື່ອນຍ້າຍໄດ້; ເຖິງຢ່າງນັ້ນ, ມັນກໍຍັງເປັນສິ່ງປຸກສ້າງທີ່ມີຄວາມສະຫງ່າງາມຍິ່ງແທ້. ຝາຂ້າງຂອງຫໍເຕັນສັກສິດເຮັດດ້ວຍແຜ່ນໄມ້ທີ່ໂອບດ້ວຍຄຳຢ່າງໜາ ແລະ ຕັ້ງຢູ່ເທິງຕີນຮອງເຊິ່ງເຮັດດ້ວຍເງິນ. ສ່ວນຫຼັງຄາແມ່ນເຮັດຈາກຜ້າກັ້ງຫຼາຍຊັ້ນ, ໂດຍຊັ້ນນອກສຸດເປັນໜັງສັດ ແລະ ຊັ້ນໃນສຸດເປັນຜ້າປ່ານເນື້ອລະອຽດທີ່ປັກລວດລາຍຮູບເຄຣຸບຢ່າງງົດງາມ. ນອກຈາກເດີ່ນຂ້າງນອກທີ່ມີແທ່ນສຳລັບເຜົາເຄື່ອງຖວາຍບູຊາແລ້ວ, ຫໍເຕັນສັກສິດເອງປະກອບດ້ວຍສອງຫ້ອງຄື: ຫ້ອງທີໜຶ່ງເອີ້ນວ່າສະຖານທີ່ສັກສິດ ແລະ ອີກຫ້ອງໜຶ່ງເອີ້ນວ່າສະຖານທີ່ສັກສິດທີ່ສຸດ. ສອງຫ້ອງນີ້ຖືກແຍກອອກຈາກກັນດ້ວຍຜ້າກັ້ງທີ່ມີການປັກລວດລາຍອັນງົດງາມ. ມີຜ້າກັ້ງອີກຜືນໜຶ່ງທີ່ຄ້າຍຄືກັນ ປິດທາງເຂົ້າຫ້ອງທຳອິດ. *{GC 411.2}*

ສະຖານທີ່ສັກສິດ ແລະ ສະຖານທີ່ສັກສິດທີ່ສຸດ

ຢູ່ດ້ານທິດໃຕ້ໃນສະຖານທີ່ສັກສິດມີຕັກຕະກຽງທີ່ມີຕະກຽງເຈັດໜ່ວຍ ເຊິ່ງສ່ອງໃຫ້ຫໍເຕັນສັກສິດສະຫວ່າງທັງກາງເວັນ ແລະ ກາງຄືນ; ທາງດ້ານທິດເໜືອມີໂຕ๊ະສຳລັບເຂົ້າຈີ່ຖວາຍ. ຢູ່ຕໍ່ໜ້າຜ້າກັ້ງທີ່ແຍກສະຖານທີ່ສັກສິດຈາກສະຖານທີ່ສັກສິດທີ່ສຸດ ແມ່ນແທ່ນບູຊາຄຳສຳລັບເຜົາເຄື່ອງຫອມ; ຈາກບ່ອນນັ້ນ, ກິ່ນຫອມພ້ອມຄຳອະທິຖານຂອງຊາວອິດສະຣາເອນ ໄດ້ລອຍຂຶ້ນໄປຕໍ່ເບື້ອງພຣະພັກພຣະເຈົ້າທຸກໆມື້. *{GC 412.1}*

ໃນສະຖານທີ່ສັກສິດທີ່ສຸດມີຫີບພັນທະສັນຍາຕັ້ງຢູ່, ເຊິ່ງເຮັດດ້ວຍໄມ້ທີ່ມີລາຄາແພງ ແລະ ຫຸ້ມຫໍ່ດ້ວຍຄຳ, ເປັນບ່ອນເກັບແຜ່ນຫີນສອງແຜ່ນ ທີ່ພຣະເຈົ້າຊົ່ວຈາລຶກພຣະບັນຍັດສິບປະການໄວ້. ມີຝາອັດຫີບພັນທະສັນຍາເອີ້ນວ່າ ພຣະທີ່ນັ່ງແຫ່ງພຣະກະລຸນາ ເຊິ່ງເປັນຊິ້ນງານທີ່ເຮັດດ້ວຍຝີມືອັນປານີດງົດງາມ. ມີຮູບເຄຣຸບສອງຕົ້ນຢູ່ເທິງຝາອັດນັ້ນຂ້າງລະຕົ້ນ, ທັງຝາອັດ ແລະ ເຄຣຸບເປັນຄຳບໍຣິສຸດເນື້ອດຽວກັນ. ໃນຫ້ອງສັກສິດທີ່ສຸດນີ້ ພຣະເຈົ້າຊົ່ວປາກົດໃນແສງຣັດສະໝີອັນເຈີດຈ້າລະຫວ່າງຮູບເຄຣຸບທັງສອງ. *{GC 412.2}*

ຫຼັງຈາກຊາວເຮັບເຣີຍ້າຍໄປຕັ້ງຖິ່ນຖານໃນແຜ່ນດິນການາອານ, ພຣະວິຫານຂອງກະສັດໂຊໂລໂມນຖືກສ້າງຂຶ້ນມາແທນຫໍເຕັນສັກສິດ. ເຖິງແມ່ນວ່າພຣະວິຫານນີ້ເປັນໂຄງສ້າງທີ່ມີຂະໜາດໃຫຍ່ກວ່າ ແລະ ມີລັກສະນະຖາວອນທີ່ບໍ່ສາມາດນ້ຳ ແລະ ປະກອບໃໝ່ໄດ້, ແຕ່ກໍຍັງຮັກສາສັດສ່ວນດຽວກັນ ແລະ ມີການຕົບແຕ່ງທີ່ຄ້າຍຄືກັນກັບຫໍເຕັນສັກສິດ. ສະຖານນະມັດສະການໄດ້ຢູ່ໃນຮູບແບບ

ພຣະວິຫານ ຈົນກະທັ້ງຖືກທຳລາຍໂດຍຊາວໂຣມໃນປີ ຄ.ສ. 70, ຍົກເວັ້ນໃນສະໄໝຂອງດານີເອນທີ່ ມັນຖືກທຳລາຍໄປຊົ່ວໄລຍະໜຶ່ງ. *{GC 412.3}*

ຕາມຂໍ້ມູນທີ່ພຣະຄຳພີບັນທຶກໄວ້, ນີ້ແມ່ນສະຖານບໍຣິສຸດບ່ອນດຽວທີ່ເຄີຍມີຢູ່ໃນໂລກ. ອາຈານ ໂປໂລກ່າວວ່າ, ນີ້ແມ່ນສະຖານສັກສິດແຫ່ງພັນທະສັນຍາເດີມ. ແລ້ວພັນທະສັນຍາໃໝ່ມີສະຖານບໍຣິສຸດ ສັກສິດບໍ? *{GC 412.4}*

ເມື່ອກັບໄປອ່ານພຣະທຳເຮັບເຣີ, ຜູ້ສະແຫວງຫາຄວາມຈິງໄດ້ພົບວ່າ ສະຖານບໍຣິສຸດແຫ່ງທີ ສອງ ຫຼື ສະຖານສັກສິດແຫ່ງພັນທະສັນຍາໃໝ່ ໄດ້ຖືກບົ່ງບອກໄວ້ແລ້ວໃນຂໍ້ຄວາມຂອງອາຈານ ໂປໂລທີ່ກ່າວວ່າ: "ແທ້ຈິງເຖິງແມ່ນພັນທະສັນຍາເດີມນັ້ນ *ກໍຍັງ*ໄດ້ມີກົດສຳລັບການບົວລະບັດໃນພິທີ ນະມັດສະການ ແລະ ໄດ້ມີສະຖານອັນບໍຣິສຸດສຳລັບໂລກນີ້." (ເຮັບເຣີ 9:1 TKJV). ຄຳວ່າ "ກໍ ຍັງ" ໃນຂໍ້ນີ້ສະແດງວ່າອາຈານໂປໂລໄດ້ກ່າວເຖິງສະຖານບໍຣິສຸດສັກສິດກ່ອນໜ້ານີ້. ເມື່ອກັບໄປອ່ານ ເຮັບເຣີບົດທີ 8 ຕອນຕົ້ນກໍພົບຂໍ້ຄວາມທີ່ຂຽນໄວ້ວ່າ "ເລື່ອງທີ່ເຮົາກຳລັງເວົ້າຢູ່ນີ້ມີຂໍ້ສຳຄັນ ຄືພວກເຮົາ ມີພຣະມະຫາປະໂຣຫິດຢ່າງນີ້ ຄືພຣະມະຫາປະໂຣຫິດຜູ້ປະທັບຢູ່ເບື້ອງຂວາພຣະທີ່ນັ່ງຂອງຜູ້ຊົງຣິດ ເດຊານຸພາບໃນສະຫວັນ. ພຣະອົງບົວລະບັດຮັບໃຊ້ເປັນມະຫາປະໂຣຫິດຢູ່ໃນສະຖານທີ່ສັກສິດທີ່ສຸດ ຄື ຢູ່ໃນຫໍເຕັນສັກສິດອັນແທ້ຈິງ ເຊິ່ງບໍ່ແມ່ນມະນຸດເປັນຜູ້ຕັ້ງຂຶ້ນ ແຕ່ແມ່ນອົງພຣະຜູ້ເປັນເຈົ້າໄດ້ຊົງຕັ້ງ ໄວ້." (ເຮັບເຣີ 8:1, 2). *{GC 413.1}*

ນີ້ແມ່ນສະຖານບໍຣິສຸດແຫ່ງພັນທະສັນຍາໃໝ່. ສະຖານສັກສິດແຫ່ງພັນທະສັນຍາເດີມ ແມ່ນຫໍເຕັນ ສັກສິດທີ່ໂມເຊເປັນຜູ້ສ້າງຂຶ້ນ. ແຕ່ສະຖານສັກສິດອີກແຫ່ງໜຶ່ງ ແມ່ນອົງພຣະຜູ້ເປັນເຈົ້າເປັນຜູ້ສ້າງ ຂຶ້ນ ບໍ່ແມ່ນມະນຸດ. ໃນສະຖານບໍຣິສຸດອັນທຳອິດ ມະນຸດບົວລະບັດຮັບໃຊ້ໃນຖານະປະໂຣຫິດ; ສ່ວນໃນ ສະຖານບໍຣິສຸດແຫ່ງທີສອງ ພຣະຄຣິສບົວລະບັດຮັບໃຊ້ຢູ່ເບື້ອງຂວາພຣະຫັດຂອງພຣະເຈົ້າ ໃນຖານະ ມະຫາປະໂຣຫິດຂອງພວກເຮົາ. ສະແດງວ່າ, ມີສະຖານນະມັດສະການແຫ່ງໜຶ່ງຢູ່ໃນໂລກ ແລະ ມີ ອີກແຫ່ງໜຶ່ງຢູ່ໃນສະຫວັນ. *{GC 413.2}*

ຍິ່ງໄປກວ່ານັ້ນ, ຫໍເຕັນສັກສິດທີ່ໂມເຊສ້າງຂຶ້ນ ກໍໄດ້ຖືກສ້າງໄປຕາມແບບແຜນ. ພຣະເຈົ້າຊົງບັນຊາ ແກ່ໂມເຊວ່າ: "ຈົ່ງເຮັດຫໍເຕັນສັກສິດ ແລະ ເຄື່ອງປະກອບນັ້ນ ຕາມແບບແຜນທີ່ເຮົາຈະສຳແດງໃຫ້ເຈົ້າ ເບິ່ງ" ແລະ ຍັງຊົງບັນຊາອີກວ່າ: "ຈົ່ງເອົາໃຈໃສ່ເຮັດສິ່ງເຫຼົ່ານີ້ຕາມແບບແຜນທີ່ເຮົາໄດ້ສຳແດງຕໍ່ເຈົ້າທີ່ ເທິງພູນັ້ນ." (ອົບພະຍົບ 25:9, 40). ສ່ວນອາຈານໂປໂລກ່າວເຖິງຫໍເຕັນສັກສິດທີ່ຢູ່ໃນໂລກວ່າ, "ເປັນ ເຄື່ອງປຽບສຳລັບໃນເວລານັ້ນ" ເຊິ່ງມີການຖວາຍຂອງທານ ແລະ ເຄື່ອງບູຊາ. ຫ້ອງສັກສິດຕ່າງໆ ຂອງຫໍເຕັນສັກສິດ ແມ່ນແບບຈຳລອງຂອງສິ່ງທີ່ຢູ່ "ໃນສະຫວັນ." ສ່ວນປະໂຣຫິດທີ່ຖວາຍບູຊາຕາມ ກົດບັນຍັດ ກໍປະຕິບັດໃນສະຖານນະມັດສະການ "ອັນເປັນແບບຈຳລອງ ແລະ ເປັນເງົາຂອງສິ່ງທີ່ຢູ່ ໃນສະຫວັນ." ພຣະຄຣິສ "ບໍ່ໄດ້ສະເດັດເຂົ້າໄປໃນສະຖານສັກສິດທີ່ຖືກສ້າງຂຶ້ນດ້ວຍມືມະນຸດ ຕາມ ແບບຢ່າງໃນສະຫວັນ; ແຕ່ເວລານີ້ ພຣະອົງໄດ້ສະເດັດເຂົ້າໄປໃນສະຫວັນ ເພື່ອເຂົ້າເຝົ້າພຣະເຈົ້າແທນ ພວກເຮົາ." (ເຮັບເຣີ 9:9 TH1940, 23; 8:5 LCV; 9:24). *{GC 413.3}*

ສະຖານບໍຣິສຸດໃນສະຫວັນ ບ່ອນທີ່ພຣະເຢຊູປະຕິບັດພາລະກິດເພື່ອພວກເຮົານັ້ນ ແມ່ນຕົ້ນແບບ ອັນຍິ່ງໃຫຍ່ ເຊິ່ງຫໍເຕັນສັກສິດທີ່ໂມເຊສ້າງຂຶ້ນເປັນພຽງແບບຈຳລອງ. ພຣະເຈົ້າປະທານພຣະວິນຍານ ຂອງພຣະອົງແກ່ຜູ້ສ້າງສະຖານນະມັດສະການໃນແຜ່ນດິນໂລກ. ຄວາມຊຳນານດ້ານສິລະປະທີ່ສະແດງ ອອກໃນການສ້າງຫໍເຕັນສັກສິດນັ້ນ ສະແດງເຖິງພຣະປັນຍາຂອງພຣະເຈົ້າ ຕາມຕົວຢ່າງຕໍ່ໄປນີ້: ຝາ ຂ້າງມີລັກສະນະເປັນຄຳລ້ວນ ທີ່ສະທ້ອນແສງແວວວາວໄປທຸກດ້ານ ຈາກຕະກຽງເຈັດດວງຂອງ ຫຼັກຕະກຽງຄຳ; ໂຕ๊ະສຳລັບວາງເຂົ້າຈີ່ຖວາຍ ແລະ ແທ່ນເຜົາເຄື່ອງຫອມເຫຼື້ອມແສງ ດຸດດັ່ງຄຳ

ຂັດເງົາ; ເພດານເປັນຜ້າກັ້ງງາມຫຼູຫຼາ ປະດັບດ້ວຍຮູບທູດສະຫວັນສີຟ້າ, ສີມ່ວງ ແລະ ສີແດງ ເຂັ້ມ ເຮັດໃຫ້ສະຖານທີ່ນັ້ນງົດງາມຍິ່ງຂຶ້ນ. ຣັດສະໝີພາບຂອງພຣະເຈົ້າປາກົດຢູ່ດ້ານຫຼັງຜ້າກັ້ງ ຊັ້ນທີສອງ. ມີພຽງແຕ່ມະຫາປະໂຣຫິດເທົ່ານັ້ນທີ່ສາມາດເຂົ້າໄປໃນບ່ອນນັ້ນໄດ້ ແລະ ຍັງມີຊີວິດ ຢູ່. *{GC 414.1}*

ຄວາມງົດງາມອັນບໍ່ມີສິ່ງໃດປຽບປານໄດ້ຂອງຫໍເຕັນສັກສິດໃນໂລກ ສະທ້ອນໃຫ້ມະນຸດເຫັນເຖິງ ສະຫງ່າຣາສີຂອງພຣະວິຫານໃນສະຫວັນ ເຊິ່ງເປັນບ່ອນທີ່ພຣະຄຣິສຜູ້ບຸກເບີກທາງຂອງພວກເຮົາ ຊົງ ປະຕິບັດໜ້າທີ່ຢູ່ຕໍ່ໜ້າພຣະບັນລັງຂອງພຣະເຈົ້າເພື່ອພວກເຮົາ. ສະຖານທີ່ແຫ່ງນີ້ເປັນທີ່ປະທັບຂອງພຣະ ມະຫາກະສັດຜູ້ຍິ່ງໃຫຍ່ເໜືອກະສັດທັງປວງ, "ມີຫຼາຍພັນຄົນບໍລິລະບັດຮັບໃຊ້ເພິ່ນຢູ່ທີ່ນັ້ນ ແລະ ມີ ຫຼາຍລ້ານຄົນຢືນຢູ່ຊ້ອງໜ້າເພິ່ນ." (ດານີເອນ 7:10). ພຣະວິຫານໃນສະຫວັນເຕັມໄປດ້ວຍສະຫງ່າຣາສີ ແຫ່ງພຣະບັນລັງນິຣັນ, ເປັນບ່ອນທີ່ເຫຼົ່າເສຣາຟິມເຮັດໜ້າທີ່ປົກປັກຮັກສາ; ທູດສະຫວັນກຸ່ມນີ້ເປັ່ງປະ ກາຍຮຸ່ງເຮືອງເຫຼືອງເຫຼື້ອມ; ພວກເຂົາເອົາປີກປົກໜ້າດ້ວຍຄວາມເຄົາລົບຢຳເກງ. ສິ່ງປຸກສ້າງທີ່ຍິ່ງໃຫຍ່ ທີ່ສຸດທີ່ມະນຸດເຄີຍສ້າງຂຶ້ນມາ ບໍ່ສາມາດປຽບທຽບໄດ້ກັບຂະໜາດອັນກວ້າງໃຫຍ່ຂອງພຣະວິຫານ ໃນສະຫວັນ ແລະ ຄວາມສະຫງ່າງາມຂອງອາຄານທີ່ຫຼູຫຼາທີ່ສຸດຢູ່ໃນໂລກ ກໍບໍ່ສາມາດປຽບໄດ້ກັບ ສະຫງ່າຣາສີຂອງພຣະວິຫານນັ້ນໄດ້. ເຖິງຢ່າງໃດກໍຕາມ, ຫໍເຕັນສັກສິດ ແລະ ພິທີການຖວາຍ ບູຊາ ໄດ້ສອນຄວາມຈິງອັນສຳຄັນກ່ຽວກັບພຣະວິຫານໃນສະຫວັນ ແລະ ວຽກງານອັນຍິ່ງໃຫຍ່ໃນການ ໄຖ່ມະນຸດໃຫ້ລອດພົ້ນທີ່ດຳເນີນຢູ່ໃນພຣະວິຫານເບື້ອງເທິງ. *{GC 414.2}*

ສອງຫ້ອງທີ່ສຳຄັນ

ສະຖານທີ່ສັກສິດທັງສອງຫ້ອງຂອງຫໍເຕັນສັກສິດ ເປັນສັນຍະລັກຂອງພຣະວິຫານໃນສະຫວັນ. ອັກຄະສາວົກໂຢຮັນໄດ້ຮັບນິມິດ ແລະ ເຫັນພຣະວິຫານຂອງພຣະເຈົ້າໃນສະຫວັນ. "ຕໍ່ໜ້າບັນລັງ ນັ້ນ ມີຕະກຽງໄຕ້ໄວ້ຢູ່ເຈັດໜ່ວຍ." (ພຣະນິມິດ 4:5). ເພິ່ນເຫັນທູດສະຫວັນອົງໜຶ່ງ "ຖືໝໍ້ຄຳໜຶ່ງ ໜ່ວຍ." ທູດສະຫວັນອົງນັ້ນ "ໄດ້ຮັບເຄື່ອງຫອມຈຳນວນຫຼວງຫຼາຍ ເພື່ອເຜົາຖວາຍເທິງແທ່ນບູຊາ ທອງຄຳທີ່ຢູ່ຕໍ່ໜ້າບັນລັງ ພ້ອມກັບຄຳອະທິຖານຂອງຄົນຂອງພຣະເຈົ້າ." (ພຣະນິມິດ 8:3 LCV). ໃນ ນິມິດນັ້ນ, ຜູ້ເຜີຍພຣະທຳໂຢຮັນ ໄດ້ຮັບອະນຸຍາດໃຫ້ເຫັນຫ້ອງທຳອິດຂອງສະຖານທີ່ສັກສິດໃນສະຫວັນ ແລະ ເຫັນວ່າໃນນັ້ນມີ "ຕະກຽງໄຕ້ໄວ້ຢູ່ເຈັດໜ່ວຍ" ແລະ "ແທ່ນບູຊາທອງຄຳ" ເຊິ່ງເປັນຕົ້ນແບບຂອງ ຫຼັກຕະກຽງ ແລະ ແທ່ນສຳລັບເຜົາເຄື່ອງຫອມໃນຫໍເຕັນສັກສິດເທິງແຜ່ນດິນໂລກ. ແລ້ວໂຢຮັນເບິ່ງອີກ ເທື່ອໜຶ່ງ ແລະ ເຫັນ "ວິຫານຂອງພຣະເຈົ້າໃນສະຫວັນ." ເພິ່ນເບິ່ງຜ່ານຜ້າກັ້ງເຂົ້າໄປໃນສະຖານທີ່ ສັກສິດທີ່ສຸດ ແລະ ເຫັນ "ຫີບພັນທະສັນຍາ" ເຊິ່ງເປັນຕົ້ນແບບຂອງຫີບສັກສິດທີ່ໂມເຊສ້າງຂຶ້ນ ເພື່ອ ບັນຈຸພຣະບັນຍັດຂອງພຣະເຈົ້າ. (ພຣະນິມິດ 11:19 LCV). *{GC 414.3}*

ດັ່ງນັ້ນ, ຜູ້ທີ່ສຶກສາເລື່ອງນີ້ຈຶ່ງພົບຫຼັກຖານທີ່ປະຕິເສດບໍ່ໄດ້ວ່າ ແທ້ຈິງມີພຣະວິຫານໃນສະຫວັນ ອັນ ເປັນຕົ້ນແບບທີ່ພຣະເຈົ້າຊົງສຳແດງແກ່ໂມເຊ ເພື່ອໃຊ້ໃນການສ້າງຫໍເຕັນສັກສິດ. ອາຈານໂປໂລສອນ ວ່າ ຕົ້ນແບບນັ້ນແມ່ນຫໍເຕັນສັກສິດແທ້ເຊິ່ງຢູ່ໃນສະຫວັນ. ສ່ວນອັກຄະສາວົກໂຢຮັນກໍເປັນພະຍານ ວ່າ ເພິ່ນໄດ້ເຫັນສະຖານທີ່ສັກສິດດັ່ງກ່າວໃນສະຫວັນເຊັ່ນກັນ. *{GC 415.1}*

ພຣະເຈົ້າປະທັບໃນພຣະວິຫານໃນສະຫວັນ, ບັນລັງຂອງພຣະອົງຕັ້ງໝັ້ນຢູ່ດ້ວຍຄວາມຊອບທຳ ແລະ ຄວາມຍຸຕິທຳ. ໃນສະຖານທີ່ສັກສິດທີ່ສຸດ ມີພຣະບັນຍັດຂອງພຣະອົງ, ເຊິ່ງເປັນກົດເກນອັນ ຍິ່ງໃຫຍ່ທີ່ໃຊ້ທົດສອບມະນຸດທຸກຄົນ. ພຣະທີ່ນັ່ງແຫ່ງພຣະກະລຸນາເປັນຝາປິດຫີບພັນທະສັນຍາ ເຊິ່ງ

ບັນຈຸແຜ່ນຫີນພຣະບັນຍັດນັ້ນ. ພຣະຄຣິສຊົງວິງວອນເພື່ອຄົນບາບຕໍ່ໜ້າສິ່ງເຫຼົ່ານີ້ ໂດຍອ້າງເຖິງພຣະໂລຫິດຂອງພຣະອົງໃນການຊ່ວຍເຫຼືອຄົນບາບ. ໃນແຜນການໄຖ່ມະນຸດໃຫ້ລອດ ຈຶ່ງປາກົດໃຫ້ເຫັນເຖິງການເຂົ້າຮ່ວມກັນລະຫວ່າງຄວາມເມດຕາ ແລະ ຄວາມຍຸຕິທຳ ເຊິ່ງເປັນສິ່ງທີ່ມີແຕ່ພຣະປັນຍາອັນບໍ່ມີຂອບເຂດເທົ່ານັ້ນທີ່ສາມາດຄິດຂຶ້ນໄດ້ ແລະ ມີແຕ່ຣິດທານຸພາບອັນບໍ່ມີຂອບເຂດເທົ່ານັ້ນທີ່ສາມາດເຮັດໃຫ້ສຳເລັດໄດ້. ການທີ່ພຣະເມດຕາ ແລະ ຄວາມຍຸຕິທຳໄດ້ເຂົ້າຮ່ວມກັນນັ້ນ ເຮັດໃຫ້ຊາວສະຫວັນທັງປວງເຕັມໄປດ້ວຍຄວາມອັດສະຈັນໃຈ ແລະ ຄວາມເຄົາລົບບູຊາຕໍ່ພຣະເຈົ້າ. ເຄຣຸບໃນຫໍເຕັນສັກສິດ ເບິ່ງລົງມາຍັງພຣະທີ່ນັ່ງແຫ່ງພຣະກະລຸນາດ້ວຍຄວາມເຄົາລົບຢຳເກງ ສະແດງເຖິງຄວາມສົນໃຈ ທີ່ບັນດາທູດສະຫວັນມີຕໍ່ພັນທະກິດແຫ່ງການໄຖ່ມະນຸດໃຫ້ລອດ. ນີ້ຄືຄວາມເລິກລັບແຫ່ງພຣະກະລຸນາ ທີ່ເຫຼົ່າທູດສະຫວັນປາຖະໜາຈະເຂົ້າໃຈ. ພວກເຂົາຢາກເຂົ້າໃຈວ່າ ພຣະເຈົ້າຈະຊົງຍຸຕິທຳໄດ້ຢ່າງໃດ ໃນຂະນະທີ່ພຣະອົງໃຫ້ອະໄພຄົນບາບທີ່ກັບໃຈ ແລະ ຟື້ນຟູການຕິດຕໍ່ສື່ສານກັບມະນຸດສະໂລກຜູ້ຕົກໃນຄວາມບາບ. ເຫຼົ່າທູດສະຫວັນສົນໃຈໃນເລື່ອງຂອງພຣະຄຣິສ ທີ່ພຣະອົງຊົງຖ່ອມພຣະອົງລົງເພື່ອຊ່ວຍເຫຼືອຄົນຈຳນວນມະຫາສານຂຶ້ນຈາກຄວາມພິນາດ ແລະ ໃຫ້ພວກເຂົານຸ່ງເຄື່ອງບໍຣິສຸດແຫ່ງຄວາມຊອບທຳຂອງພຣະອົງ ເພື່ອໃຫ້ພວກເຂົາສາມາດຢູ່ຮ່ວມກັບເຫຼົ່າທູດສະຫວັນທີ່ບໍ່ເຄີຍເຮັດບາບ ແລະ ອາໄສຢູ່ກັບພຣະເຈົ້າຕະຫຼອດໄປເປັນນິດ. *{GC 415.2}*

ພັນທະກິດຂອງພຣະຄຣິສໃນຖານະຜູ້ອ້ອນວອນເພື່ອມະນຸດໄດ້ຖືກສະແດງໄວ້ໃນຄຳພະຍາກອນອັນງົດງາມຂອງເຊກາຣີຢາທີ່ກ່າວເຖິງພຣະອົງຜູ້ຊົງມີພຣະນາມວ່າ “ກິ່ງ.” ຜູ້ເຜີຍພຣະທຳເຊກາຣີຢາກ່າວວ່າ: “ທ່ານຜູ້ນີ້ແຫຼະຈະເປັນຜູ້ສ້າງພຣະວິຫານຂອງພຣະເຢໂຮວາ ແລະ ຈະຮັບກຽດຕິສັກ ແລະ ຈະປະທັບ ແລະ ປົກຄອງຢູ່ເທິງຣາຊບັນລັງຂອງ[ພຣະບິດາ] ແລະ ທ່ານຈະເປັນປະໂຣຫິດຢູ່ເທິງຣາຊບັນລັງຂອງທ່ານ ແລະ *ການຫາລືກັນຢ່າງສັນຕິ*ຈະມີຢູ່ລະຫວ່າງທ່ານທັງສອງ.” (ເຊກາຣີຢາ 6:12, 13 TKJV). *{GC 415.3}*

ພຣະອົງ “ຈະເປັນຜູ້ສ້າງພຣະວິຫານຂອງພຣະເຢໂຮວາ.” ໂດຍການເສຍສະຫຼະ ແລະ ການເປັນຄົນກາງລະຫວ່າງພຣະເຈົ້າກັບມະນຸດ, ພຣະຄຣິສຊົງເປັນທັງຮາກຖານ ແລະ ຜູ້ສ້າງຄຣິສຕະຈັກຂອງພຣະເຈົ້າ. ອັກຄະສາວົກໂປໂລເນັ້ນໃຫ້ເຫັນວ່າ ພຣະອົງຊົງເປັນ “ຫີນເສົາເອກ. ໃນພຣະອົງນັ້ນ, ທຸກສ່ວນຂອງໂຄງຮ່າງ ກໍຕິດຕໍ່ເຊື່ອມສະໜິດກັນໂດຍດີ ແລະ ຈະເລີນຂຶ້ນເປັນວິຫານອັນສັກສິດໃນອົງພຣະຜູ້ເປັນເຈົ້າ. ໃນພຣະອົງນັ້ນ ພວກເຈົ້າກຳລັງຖືກກໍ່ຂຶ້ນໃຫ້ເປັນທີ່ສະຖິດຂອງພຣະເຈົ້າ ໂດຍພຣະວິນຍານເໝືອນກັນ.” (ເອເຟໂຊ 2:20–22). *{GC 416.1}*

ພຣະອົງຈະໄດ້ຮັບ “ກຽດຕິສັກ.” ສັກສີຂອງການໄຖ່ມະນຸດສະໂລກຜູ້ຕົກຢູ່ໃນຄວາມບາບໃຫ້ລອດພົ້ນນັ້ນ ເປັນຂອງພຣະຄຣິສ. ຜູ້ທີ່ໄດ້ຮັບການໄຖ່ຈະຮ້ອງເພງຕະຫຼອດນິດນິຣັນວ່າ: “ພຣະອົງຊົງຮັກເຮົາທັງຫຼາຍ ແລະ ໄດ້ຊົງປົດປ່ອຍພວກເຮົາຈາກການຜິດບາບ ດ້ວຍພຣະໂລຫິດຂອງພຣະ-ອົງ . . . ພຣະກຽດ ແລະ ຣິດທານຸພາບຈົ່ງມີແດ່ພຣະອົງສືບໆໄປເປັນນິດ ອາແມນ.” (ພຣະນິມິດ 1:5, 6). *{GC 416.2}*

ພຣະອົງຈະ “ປະທັບ ແລະ ປົກຄອງຢູ່ເທິງຣາຊບັນລັງຂອງທ່ານ ແລະ ທ່ານຈະເປັນປະໂຣຫິດຢູ່ເທິງຣາຊບັນລັງຂອງທ່ານ.” (ເຊກາຣີຢາ 6:13 TKJV). ໃນຕອນນີ້, ພຣະອົງຍັງບໍ່ໄດ້ປະທັບເທິງບັນລັງອັນຮຸ່ງເຮືອງເທື່ອ ແລະ ຣາຊອານາຈັກແຫ່ງສະຫງ່າຣາສີກໍຍັງບໍ່ທັນໄດ້ເລີ່ມຕົ້ນຂຶ້ນເທື່ອ. ພຣະເຈົ້າຈະບໍ່ປະທານ “ບັນລັງຂອງດາວິດຜູ້ເປັນບັນພະບຸລຸດຂອງພຣະອົງໃຫ້ແກ່ພຣະອົງ” ແລະ ຍັງຈະບໍ່ປະທານອານາຈັກອັນຈະ “ບໍ່ມີວັນສິ້ນສຸດເລີຍ” ຈົນກວ່າພັນທະກິດຂອງພຣະອົງ ໃນຖານະຄົນກາງລະຫວ່າງພຣະເຈົ້າກັບມະນຸດໄດ້ສິ້ນສຸດລົງ. (ເບິ່ງ ລູກາ 1:32, 33 LCV). ປັດຈຸບັນພຣະຄຣິສປະທັບ

ຢູ່ກັບພຣະບິດາເທິງບັນລັງຂອງພຣະອົງໃນຖານະປະໂຣຫິດ. (ເບິ່ງ ພຣະນິມິດ 3:21). ພຣະຄຣິສ ປະທັບເທິງບັນລັງຮ່ວມກັບພຣະເຈົ້າອົງນິຣັນ ຜູ້ຊົ່ງມີຊີວິດໃນພຣະອົງເອງ. ພຣະຄຣິສຊົ່ງ "ແບກຮັບ ຄວາມທຸກໂສກຂອງເຮົາໄປ." ພຣະອົງ "ຖືກທົດລອງໃນທຸກທາງເໝືອນຢ່າງພວກເຮົາ, ເຖິງປານນັ້ນ ພຣະອົງກໍຍັງບໍ່ໄດ້ເຮັດບາບ" ເພື່ອພຣະອົງຈະສາມາດ "ຊ່ວຍບັນດາຜູ້ທີ່ກຳລັງຖືກທົດລອງໄດ້." "ຖ້າ ຜູ້ໃດເຮັດບາບ ພວກເຮົາກໍມີຜູ້ແກ້ຄວາມຕໍ່ພຣະບິດາເຈົ້າ." (ເອຊາຢາ 53:4 TNCV; ເຮັບເຣີ 4:15 LCV; 2:18 LCV; 1 ໂຢຮັນ 2:1 LCV). ສິ່ງທີ່ເຮັດໃຫ້ການອ້ອນວອນຂອງພຣະອົງມີພະລັງ ຄື: ຊີວິດທີ່ບໍຣິສຸດ, ຮ່າງກາຍທີ່ແຕກຫັກ, ພຣະຫັດທີ່ເປັນແຜ, ສີຂ້າງທີ່ຖືກແທງ ແລະ ພຣະບາດທີ່ ມີຮອຍຕະປູ; ສິ່ງເຫຼົ່ານີ້ລ້ວນແຕ່ເປັນຫຼັກຖານຂອງພຣະອົງ ໃນການວິງວອນເພື່ອມະນຸດທີ່ຕົກສູ່ຄວາມ ບາບ. ພຣະອົງຊົ່ງຊຳລະຄ່າໄຖ່ເຊິ່ງບໍ່ສາມາດປະເມີນຄ່າໄດ້ ເພື່ອໄຖ່ມະນຸດໃຫ້ລອດພົ້ນ. *{GC 416.3}*

"ການຫາລືກັນຢ່າງສັນຕິຈະມີຢູ່ລະຫວ່າງທ່ານທັງສອງ." (ເຊກາຣີຢາ 6:13 TKJV). ຄວາມຮັກ ຂອງພຣະບິດາບໍ່ໄດ້ໜ້ອຍໄປກວ່າຄວາມຮັກຂອງພຣະບຸດ; ຄວາມຮັກນີ້ ເປັນບໍ່ເກີດແຫ່ງຄວາມລອດພົ້ນ ສຳລັບມະນຸດຊາດທີ່ໄດ້ຕົກສູ່ຄວາມບາບ. ພຣະເຢຊູຊົ່ງກ່າວແກ່ເຫຼົ່າສາວົກຂອງພຣະອົງກ່ອນທີ່ພຣະອົງ ຈະສະເດັດຈາກໄປວ່າ: "ເຮົາບໍ່ໄດ້ເວົ້າວ່າ ເຮົາຈະຂໍພຣະບິດາເຈົ້າແທນພວກເຈົ້າ. ດ້ວຍວ່າ, ພຣະບິດາ ເຈົ້າເອງກໍຮັກພວກເຈົ້າ." (ໂຢຮັນ 16:26, 27 LCV). "ພຣະເຈົ້າຜູ້ຊົ່ງສະຖິດຢູ່ໃນອົງພຣະຄຣິສໄດ້ ຊົ່ງກະທຳໃຫ້ມະນຸດຄືນດີກັນກັບພຣະອົງ." (2 ໂກຣິນໂທ 5:19 LO1972). ໃນການປະຕິບັດໜ້າທີ່ໃນ ສະຖານບໍຣິສຸດເບື້ອງເທິງ "ການຫາລືກັນຢ່າງສັນຕິຈະມີຢູ່ລະຫວ່າງທ່ານທັງສອງ." "ພຣະເຈົ້າ*ຮັກໂລກ ຈົນ*ໄດ້ມອບພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດ ອັນຕະຫຼອດໄປເປັນນິດ." (ໂຢຮັນ 3:16 LCV). *{GC 416.4}*

ພົບຄຳຕອບແລ້ວ

ຄຳຖາມທີ່ວ່າ 'ສະຖານບໍຣິສຸດແມ່ນຫຍັງ?' ໄດ້ຮັບຄຳຕອບຢ່າງຈະແຈ້ງແລ້ວໃນພຣະຄຳພີ. ຄຳ ວ່າ "ສະຖານບໍຣິສຸດ," "ສະຖານສັກສິດ," ແລະ "ສະຖານນະມັດສະການ" ຕາມທີ່ໃຊ້ໃນພຣະ-ຄຳພີນັ້ນ ໝາຍເຖິງ: 1) ຫໍເຕັ້ນສັກສິດທີ່ໂມເຊສ້າງຂຶ້ນ ເຊິ່ງເປັນແບບຈຳລອງຂອງສິ່ງທີ່ຢູ່ໃນ ສະຫວັນ ແລະ 2) "ຫໍເຕັ້ນສັກສິດອັນແທ້ຈິງ" ເຊິ່ງຢູ່ໃນສະຫວັນ; ສ່ວນຫໍເຕັ້ນສັກສິດໃນໂລກ ນີ້ເປັນພຽງສັນຍະລັກເທົ່ານັ້ນ. ເມື່ອພຣະຄຣິສສິ້ນພຣະຊົນ, ລະບົບຂອງການຖວາຍບູຊາ ເຊິ່ງເປັນ ສັນຍະລັກຂອງພຣະຄຣິສກໍສິ້ນສຸດລົງ. "ຫໍເຕັ້ນສັກສິດອັນແທ້ຈິງ" ໃນສະຫວັນແມ່ນສະຖານບໍຣິສຸດ ຕາມພັນທະສັນຍາໃໝ່. ເນື່ອງຈາກຄຳພະຍາກອນໃນພຣະທຳດານີເອນ 8:14 ສຳເລັດໃນຍຸກສະໄໝ ນີ້, ສະຖານບໍຣິສຸດທີ່ກ່າວເຖິງໃນຂໍ້ນັ້ນ ຕ້ອງເປັນສະຖານບໍຣິສຸດຕາມພັນທະສັນຍາໃໝ່. 2,300 ວັນ ແຫ່ງຄຳພະຍາກອນໄດ້ສິ້ນສຸດລົງໃນປີ 1844, ໃນເວລານັ້ນບໍ່ມີສະຖານບໍຣິສຸດຢູ່ໃນໂລກເປັນເວລາຫຼາຍ ຮ້ອຍປີ. ສະນັ້ນ, ຄຳພະຍາກອນທີ່ກ່າວວ່າ "ຢູ່ມາ 2,300 ວັນ ແລ້ວສະຖານບໍຣິສຸດນັ້ນຈະໄດ້ຮັບການ ຊຳລະ"[2] ຕ້ອງໝາຍເຖິງສະຖານບໍຣິສຸດໃນສະຫວັນໂດຍບໍ່ມີຂໍ້ສົງໄສ. *{GC 417.1}*

ແຕ່ຄຳຖາມທີ່ສຳຄັນທີ່ສຸດທີ່ຍັງຕ້ອງໄດ້ຫາຄຳຕອບຄື: ການຊຳລະສະຖານບໍຣິສຸດໝາຍຄວາມວ່າ ແນວໃດ? ພຣະຄຳພີເດີມກ່າວເຖິງພິທີຊຳລະຫໍເຕັ້ນສັກສິດ, ແຕ່ມີສິ່ງໃດໃນສະຫວັນທີ່ຈະຕ້ອງໄດ້ຮັບ ການຊຳລະ? ພຣະທຳເຮັບເຣີບົດທີ 9 ໄດ້ສອນຢ່າງຈະແຈ້ງກ່ຽວກັບການຊຳລະທັງສະຖານບໍຣິສຸດໃນ ໂລກ ແລະ ສະຖານບໍຣິສຸດໃນສະຫວັນ ໂດຍກ່າວວ່າ: "ກົດບັນຍັດໄດ້ລະບຸໃຫ້ຊຳລະເກືອບໝົດທຸກສິ່ງ ດ້ວຍເລືອດ ແລະ ຖ້າບໍ່ມີເລືອດໄຫຼອອກແລ້ວກໍບໍ່ມີການອະໄພບາບ. ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງຊຳລະສິ່ງ

[2] ດານີເອນ 8:14 ດັດແປງຈາກສະບັບ TKJV.

ຕ່າງ ໆ ອັນເປັນແບບຈຳລອງຂອງສະຫວັນດ້ວຍເຄື່ອງບູຊາເຫຼົ່ານີ້, ແຕ່ສິ່ງຂອງໃນສະຫວັນເອງ ຕ້ອງ ຊຳລະດ້ວຍເຄື່ອງບູຊາທີ່ດີຫຼາຍກວ່ານີ້,"[3] ກໍຄືພຣະໂລຫິດອັນລ້ຳຄ່າຂອງພຣະຄຣິສ. *{GC 417.2}*

ການຊຳລະສະຖານບໍຣິສຸດ

ການຊຳລະຫໍເຕັນສັກສິດໃນໂລກ ແລະ ການຊຳລະພຣະວິຫານໃນສະຫວັນ ລ້ວນແລ້ວແຕ່ຕ້ອງ ອາໄສເລືອດ. ພິທີໃນໂລກອັນເປັນສັນຍະລັກນັ້ນ ມີການໃຊ້ເລືອດຂອງສັດ; ສ່ວນການຊຳລະໃນ ສະຫວັນ ແມ່ນໃຊ້ພຣະໂລຫິດຂອງພຣະຄຣິສ. ອາຈານໂປໂລອະທິບາຍເຫດຜົນທີ່ຕ້ອງໃຊ້ເລືອດໃນການ ຊຳລະວ່າ ຖ້າບໍ່ມີການຫຼັ່ງເລືອດກໍບໍ່ມີ*ການອະໄພບາບ*. ການອະໄພ ຫຼື ການກຳຈັດຄວາມບາບອອກ ໄປ ຄືວຽກງານສຳຄັນທີ່ຕ້ອງເຮັດໃຫ້ສຳເລັດ. ແຕ່ຈະມີບາບເຊື່ອມໂຍງກັບຫໍເຕັນສັກສິດ ຫຼື ພຣະວິຫານ ໃນສະຫວັນໄດ້ແນວໃດ? ເຮົາສາມາດຮຽນຮູ້ເລື່ອງນີ້ໄດ້ ຈາກພິທີການໃນຫໍເຕັນສັກສິດອັນເປັນສັນຍະລັກ ນັ້ນ, ເພາະວ່າການປະຕິບັດໜ້າທີ່ຂອງພວກປະໂຣຫິດໃນໂລກນີ້ "ເປັນແບບຈຳລອງ ແລະ ເປັນເງົາ ຂອງສິ່ງທີ່ຢູ່ໃນສະຫວັນ." (ເຮັບເຣີ 8:5 LCV). *{GC 417.3}*

ການປະຕິບັດໜ້າທີ່ຂອງຫໍເຕັນສັກສິດໃນໂລກປະກອບດ້ວຍສອງສ່ວນ: ໃນສ່ວນທີໜຶ່ງ, ພວກ ປະໂຣຫິດໄດ້ເຮັດໜ້າທີ່ປະຈຳວັນໃນສະຖານທີ່ສັກສິດ; ໃນສ່ວນທີສອງ, ມະຫາປະໂຣຫິດໄດ້ເຮັດວຽກງານ ພິເສດແຫ່ງການລຶບລ້າງບາບ ໃນສະຖານທີ່ສັກສິດທີ່ສຸດປີລະຄັ້ງ ເພື່ອຊຳລະຫໍເຕັນສັກສິດ. ທຸກ ໆ ມື້ ຄົນບາບທີ່ສຳນຶກຜິດໄດ້ນຳເອົາເຄື່ອງບູຊາມາຍັງປະຕູຫໍເຕັນສັກສິດ ແລະ ເອົາມືວາງລົງເທິງຫົວ ຂອງສັດໂຕນັ້ນ, ພ້ອມທັງສາລະພາບບາບຂອງຕົນ, ເຊິ່ງມີຄວາມໝາຍເປັນສັນຍະລັກວ່າ ບາບຂອງ ຕົນໄດ້ຖືກໂອນໄປສູ່ສັດທີ່ບໍຣິສຸດນັ້ນ, ແລ້ວສັດກໍຖືກຂ້າ. ອັກຄະສາວົກໂປໂລກ່າວວ່າ: "ຖ້າບໍ່ມີເລືອດ ໄຫຼອອກແລ້ວກໍບໍ່ມີການອະໄພບາບ." (ເຮັບເຣີ 9:22 LCV). "ຊີວິດຂອງທຸກ ໆ ສິ່ງທີ່ເປັນຢູ່ແມ່ນຢູ່ໃນ ເລືອດ." (ລະບຽບພວກເລວີ 17:11). ພຣະບັນຍັດຂອງພຣະເຈົ້າທີ່ຖືກລ່ວງລະເມີດນັ້ນ ຮຽກຮ້ອງເອົາ ຊີວິດຂອງຜູ້ລະເມີດ. ເລືອດຂອງສັດທີ່ຖືກຂ້າເປັນສັນຍະລັກທີ່ສະແດງເຖິງຊີວິດຂອງຄົນບາບທີ່ຕ້ອງຖືກ ລົງໂທດໃຫ້ຕາຍ. ສັດທີ່ເປັນເຄື່ອງບູຊາ ໄດ້ແບກຮັບເອົາຄວາມຜິດຂອງຄົນບາບນັ້ນ ແລະ ປະໂຣຫິດ ໄດ້ນຳເລືອດຂອງສັດໂຕນັ້ນ ເຂົ້າໄປໃນສະຖານທີ່ສັກສິດ ແລະ ຊິດໃສ່ຕໍ່ໜ້າຜ້າກັ້ງ; ດ້ວຍວ່າ, ຢູ່ ຫຼັງຜ້າກັ້ງນັ້ນ ແມ່ນຫີບພັນທະສັນຍາທີ່ບັນຈຸກົດບັນຍັດທີ່ຄົນບາບໄດ້ລ່ວງລະເມີດ. ພິທີກຳນີ້ເປັນ ສັນຍະລັກສະແດງວ່າ ບາບໄດ້ຖືກໂອນໄປສູ່ຫໍເຕັນສັກສິດຜ່ານທາງເລືອດ. ໃນບາງກໍລະນີ ເລືອດບໍ່ ໄດ້ຖືກນຳເຂົ້າໄປໃນສະຖານທີ່ສັກສິດ ແຕ່ປະໂຣຫິດຈະຕ້ອງກິນຊີ້ນຂອງສັດທີ່ເປັນເຄື່ອງບູຊານັ້ນ ຕາມ ທີ່ໂມເຊໄດ້ສັ່ງລູກຊາຍທັງຫຼາຍຂອງອາໂຣນ ໂດຍກ່າວວ່າ: ພຣະອົງໄດ້ມອບສິ່ງນັ້ນໃຫ້ພວກເຈົ້າ ເພື່ອ ພວກເຈົ້າ "ຈະໄດ້ແບກຮັບຄວາມຜິດຂອງຊຸມນຸມຊົນ." (ລະບຽບພວກເລວີ 10:17 THSV). ທັງ ສອງພິທີກຳນີ້ ເປັນສັນຍະລັກສະແດງເຖິງການຖ່າຍໂອນຄວາມບາບ ຈາກຜູ້ສຳນຶກຜິດໄປຍັງຫໍເຕັນ ສັກສິດ. *{GC 418.1}*

ວຽກງານນີ້ໄດ້ດຳເນີນໄປທຸກ ໆ ມື້ຕະຫຼອດປີ, ໂດຍທີ່ຄວາມບາບຂອງຄົນອິດສະຣາເອນ ຖືກໂອນໄປ ຍັງຫໍເຕັນສັກສິດ. ດ້ວຍເຫດນີ້, ຈຶ່ງຈຳເປັນຕ້ອງມີວຽກງານພິເສດ ເພື່ອກຳຈັດຄວາມບາບເຫຼົ່ານັ້ນອອກ ໄປ. ພຣະເຈົ້າຊົງບັນຊາ ໃຫ້ມີການລຶບລ້າງຄວາມບາບສຳລັບແຕ່ລະຫ້ອງຂອງຫໍເຕັນສັກສິດ. "ລາວຈະ ເຮັດການລຶບມົນທິນຂອງສະຖານທີ່ບໍຣິສຸດນັ້ນ ເພາະເຫດມົນທິນຂອງຄົນອິດສະຣາເອນ ແລະ ເພາະ ເຫດການລະເມີດ, ເພາະບາບທັງສິ້ນຂອງພວກເຂົາ; ແລະອາໂຣນຈະກະທຳຕໍ່ຫໍເຕັນແຫ່ງຊຸມນຸມ ເຊິ່ງ ຢູ່ກັບພວກເຂົາທ່າມກາງມົນທິນຂອງປະຊາຊົນ." ນອກຈາກນັ້ນ, ຍັງມີການລຶບລ້າງຄວາມບາບໃຫ້

[3] ເຮັບເຣີ 9:22, 23 LCV.

ແທ່ນບູຊາເຜື່ອ “ຊຳລະແທ່ນບູຊາໃຫ້ບໍຣິສຸດ ພົ້ນມົນທິນຂອງຄົນອິດສະຣາເອນ.” (ລະບຽບພວກເລວີ 16:16 ດັດແປງຈາກສະບັບ TKJV, 19 THSV). *{GC 418.2}*

ວັນລຶບລ້າງບາບອັນຍິ່ງໃຫຍ່

ໃນວັນລຶບລ້າງບາບອັນຍິ່ງໃຫຍ່, ມະຫາປະໂຣຫິດເຂົ້າໄປໃນສະຖານທີ່ສັກສິດທີ່ສຸດ ເພື່ອຊຳລະຫໍເຕັ້ນສັກສິດປີລະເທື່ອ. ພາລະກິດທີ່ເພີ່ນເຮັດຢູ່ທີ່ນັ້ນ ເປັນການສິ້ນສຸດຂອງການປະຕິບັດໜ້າທີ່ຂອງແຕ່ລະປີ. ໃນວັນລຶບລ້າງບາບ, ລູກແບ້ສອງໂຕຖືກນຳມາທີ່ປະຕູຫໍເຕັ້ນສັກສິດ ແລະ ມີການຈັບສະຫຼາກເພື່ອເລືອກແບ້: “ສະຫຼາກໜຶ່ງຕົກເປັນຂອງພຣະເຢໂຮວາ ແລະ ອີກສະຫຼາກໜຶ່ງສຳລັບແບ້ຮັບບາບ.” (ລະບຽບພວກເລວີ 16:8 ດັດແປງຈາກສະບັບ TKJV). ແບ້ທີ່ຖືກຈັບສະຫຼາກເພື່ອອົງພຣະຜູ້ເປັນເຈົ້າ ຈະຖືກຂ້າເປັນເຄື່ອງບູຊາໄຖ່ບາບສຳລັບປະຊາຊົນ; ແລ້ວມະຫາປະໂຣຫິດຕ້ອງນຳເລືອດຂອງມັນເຂົ້າໄປພາຍໃນຜ້ານັ້ງ ແລະ ຊິດໃສ່ພຣະທີ່ນັ່ງແຫ່ງພຣະກະລຸນາ ແລະ ຕໍ່ໜ້າພຣະທີ່ນັ່ງແຫ່ງພຣະກະລຸນາ. ເລືອດນັ້ນຍັງຕ້ອງຖືກຊິດໃສ່ແທ່ນເຜົາເຄື່ອງຫອມທີ່ຢູ່ຕໍ່ໜ້າຜ້ານັ້ງອີກດ້ວຍ. *{GC 419.1}*

ອາໂຣນ “ຈະວາງມືທັງສອງຂອງເພີ່ນລົງເທິງຫົວແບ້ ແລະ ສາລະພາບສິ່ງຊົ່ວຮ້າຍທຸກຢ່າງ, ການບາບນາໆ ຊະນິດ ແລະ ການທຳລະຍົດທຸກປະການຂອງປະຊາຊົນອິດສະຣາເອນ ແລະ ຢອງສິ່ງທັງໝົດນີ້ທີ່ເທິງຫົວຂອງແບ້ໂຕນັ້ນ. ຕໍ່ມາແບ້ໂຕນີ້ ກໍຈະຖືກນຳອອກໄປສູ່ຖິ່ນແຫ້ງແລ້ງກັນດານ ໂດຍຊາຍທີ່ໄດ້ຖືກເລືອກໄວ້. ແບ້ໂຕນີ້ກໍຈະຮັບແບກການບາບທັງໝົດຂອງພວກເຂົາໄປສູ່ຖິ່ນເປົ່າປ່ຽວ.” (ລະບຽບພວກເລວີ 16:21–22). ແບ້ຮັບບາບຈະບໍ່ກັບຄືນມາສູ່ຄ້າຍຂອງຊາວອິດສະຣາເອນອີກ. ສ່ວນຄົນທີ່ນຳມັນອອກໄປນັ້ນຕ້ອງອາບນ້ຳ ແລະ ຊັກເສື້ອຜ້າຂອງຕົນກ່ອນກັບຄືນສູ່ຄ້າຍ. *{GC 419.2}*

ພິທີກຳທັງໝົດນີ້ຖືກອອກແບບມາ ເພື່ອໃຫ້ຊາວອິດສະຣາເອນເຂົ້າໃຈເຖິງຄວາມບໍຣິສຸດຂອງພຣະເຈົ້າ ແລະ ການທີ່ພຣະອົງຊິງກຽດຊັງຄວາມບາບ. ນອກຈາກນັ້ນ, ກໍຍັງສະແດງໃຫ້ເຫັນວ່າ ພວກເຂົາບໍ່ສາມາດຢູ່ໃກ້ກັບຄວາມບາບ ໂດຍບໍ່ເປັນມົນທິນ. ທຸກຄົນຕ້ອງຖ່ອມໃຈລົງໃນຂະນະທີ່ພິທີລຶບລ້າງບາບນີ້ກຳລັງດຳເນີນຢູ່ ແລະ ຕ້ອງຢຸດວຽກງານທຸກຢ່າງ. ຊາວອິດສະຣາເອນທັງປວງຕ້ອງໃຊ້ເວລາຕະຫຼອດມື້ນັ້ນ ໃນການຖ່ອມໃຈລົງຕໍ່ພຣະພັກພຣະເຈົ້າຢ່າງຈິງຈັງດ້ວຍການອະທິຖານ, ການອົດອາຫານ ແລະ ການສຳຫຼວດຈິດໃຈຢ່າງເລິກເຊິ່ງ. *{GC 419.3}*

ໃນພິທີກຳຕ່າງໆ ຂອງຫໍເຕັ້ນສັກສິດ ອັນເປັນສັນຍະລັກນັ້ນ ມີບົດຮຽນທີ່ສອນຄວາມຈິງອັນສຳຄັນກ່ຽວກັບການລຶບລ້າງຄວາມຜິດບາບ. ໃນພິທີທີ່ຖວາຍປະຈຳທຸກມື້ນັ້ນມີຜູ້ຮັບໂທດແທນຄົນບາບ ແຕ່ວ່າບາບນັ້ນບໍ່ໄດ້ຖືກລຶບລ້າງດ້ວຍເລືອດຂອງສັດບູຊາທີ່ຕາຍແທນ. ດ້ວຍເຫດນີ້, ຄວາມບາບຈຶ່ງຖືກໂອນໄປສູ່ຫໍເຕັ້ນສັກສິດ. ດ້ວຍການຂ້າສັດບູຊາໃຫ້ເລືອດໄຫຼອອກ ຄົນບາບກໍສະແດງເຖິງການຍອມຮັບຕໍ່ສິດອຳນາດຂອງພຣະບັນຍັດ. ລາວຈະສາລະພາບຄວາມຜິດຂອງຕົນໃນການລ່ວງລະເມີດ ແລະ ສະແດງຄວາມປາຖະໜາທີ່ຈະໄດ້ຮັບການອະໄພໂທດ ຜ່ານຄວາມເຊື່ອໃນພຣະຜູ້ໄຖ່ທີ່ຈະສະເດັດມາ. ແຕ່ເຖິງຢ່າງນັ້ນ, ລາວຍັງບໍ່ທັນໄດ້ຮັບການປົດປ່ອຍຢ່າງສົມບູນ ຈາກການຖືກກ່າວໂທດຂອງພຣະບັນຍັດ. ໃນວັນລຶບລ້າງຄວາມບາບ, ມະຫາປະໂຣຫິດໄດ້ນຳເຄື່ອງບູຊາຈາກປະຊາຊົນ, ແລ້ວນຳເລືອດຂອງສັດບູຊາເຂົ້າໄປໃນສະຖານທີ່ສັກສິດທີ່ສຸດ ແລະ ຊິດເລືອດນັ້ນໃສ່ພຣະທີ່ນັ່ງແຫ່ງພຣະກະລຸນາ ເຊິ່ງປົກຢູ່ເໜືອພຣະບັນຍັດໂດຍກົງ ເພື່ອຕອບສະໜອງຕໍ່ຂໍ້ຮຽກຮ້ອງຂອງພຣະບັນຍັດ. ຈາກນັ້ນ, ໃນຖານະຄົນກາງ, ມະຫາປະໂຣຫິດໄດ້ຮັບເອົາຄວາມບາບມາໃສ່ຕົວເພີ່ນເອງ ແລະ ນຳອອກໄປຈາກຫໍເຕັ້ນສັກສິດ. ເພີ່ນວາງມືລົງເທິງຫົວຂອງແບ້ຮັບບາບ, ສາລະພາບຄວາມບາບທັງໝົດນັ້ນ, ເຊິ່ງ

ມີຄວາມໝາຍວ່າ ເພິ່ນໄດ້ໂອນຄວາມບາບຈາກຕົນເອງໄປສູ່ແບ້ໂຕນັ້ນ. ແບ້ຮັບບາບຈຶ່ງແບກເອົາຄວາມບາບເຫຼົ່ານັ້ນໄປ ແລະ ປະຊາຊົນຖືວ່າ ບາບນັ້ນໄດ້ຖືກແຍກອອກຈາກພວກເຂົາຕະຫຼອດໄປ. {GC 420.1}

ຄວາມຈິງໃນສະຫວັນ

ນີ້ແມ່ນພິທີທີ່ພວກເຂົາເຮັດ “ອັນເປັນແບບຈຳລອງ ແລະ ເປັນເງົາຂອງສິ່ງທີ່ຢູ່ໃນສະຫວັນ.” (ເຮັບເຣີ 8:5 LCV). ສິ່ງທີ່ເຮັດເປັນຕົວຢ່າງໃນສະຖານນະມັດສະການໃນໂລກ ກໍມີການປະຕິບັດຈິງໃນສະຖານນະມັດສະການແຫ່ງສະຫວັນ. ຫຼັງຈາກພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາສະເດັດຂຶ້ນສະຫວັນ, ພຣະອົງຊົງເລີ່ມວຽກງານຂອງພຣະອົງໃນຖານະມະຫາປະໂຣຫິດຂອງພວກເຮົາ. ອາຈານໂປໂລກ່າວວ່າ: “ພຣະຄຣິສເຈົ້າບໍ່ໄດ້ເຂົ້າສູ່ສະຖານນະມັດສະການທີ່ມະນຸດສ້າງຂຶ້ນ ເຊິ່ງເປັນພຽງແບບຈຳລອງມາຈາກຂອງແທ້, ພຣະອົງເຂົ້າສູ່ສະຫວັນໂດຍກົງ, ບັດນີ້ ໄດ້ປາກົດຢູ່ຕໍ່ໜ້າພຣະເຈົ້າເພື່ອພວກເຮົາທັງຫຼາຍ.” (ເຮັບເຣີ 9:24 LCV). {GC 420.2}

ການປະຕິບັດໜ້າທີ່ຂອງປະໂຣຫິດຕະຫຼອດປີ ໃນຫ້ອງທຳອິດຂອງສະຖານນະມັດສະການ, “ທາງຫຼັງຜ້ານັ້ງ” (ເຮັບເຣີ 6:19 LCV) ເຊິ່ງເປັນປະຕູທີ່ແຍກສະຖານທີ່ສັກສິດອອກຈາກເດີ່ນດ້ານນອກ, ເປັນສັນຍະລັກຂອງວຽກງານທີ່ພຣະຄຣິສຊົງເລີ່ມຕົ້ນ ເມື່ອພຣະອົງສະເດັດຂຶ້ນສະຫວັນ. ໃນການເຮັດວຽກງານປະຈຳວັນ ປະໂຣຫິດມີໜ້າທີ່ນຳເລືອດຂອງເຄື່ອງບູຊາໄຖ່ບາບ ມາຖວາຍຕໍ່ພຣະພັກພຣະເຈົ້າ, ພ້ອມທັງເຄື່ອງຫອມທີ່ລອຍຂຶ້ນໄປພ້ອມກັບຄຳອະທິຖານຂອງຊາວອິດສະຣາເອນ. ພຣະຄຣິສກໍເຊັ່ນດຽວກັນ, ພຣະອົງຊົງວິງວອນຕໍ່ພຣະບິດາເພື່ອຄົນບາບ ໂດຍອ້າງເຖິງພຣະໂລຫິດຂອງພຣະອົງເອງ ແລະ ຊົງນຳເອົາຄຳອະທິຖານຂອງຜູ້ເຊື່ອທີ່ສຳນຶກຜິດມາເຝົ້າພຣະບິດາ ພ້ອມກັບຄວາມຊອບທຳຂອງພຣະອົງອັນເປັນກິ່ນຫອມທີ່ລ້ຳຄ່າ. ນີ້ແມ່ນວຽກງານທີ່ພຣະຄຣິສຊົງປະຕິບັດໃນຫ້ອງທຳອິດຂອງສະຖານນະມັດສະການແຫ່ງສະຫວັນ. {GC 420.3}

ເມື່ອພຣະຄຣິສສະເດັດຂຶ້ນສູ່ສະຫວັນພົ້ນຈາກສາຍຕາຂອງເຫຼົ່າສາວົກ, ພວກເຂົາໄດ້ຕິດຕາມພຣະອົງເຂົ້າໄປໃນສະຖານທີ່ສັກສິດດ້ວຍຄວາມເຊື່ອ. ຄວາມຫວັງຂອງພວກເຂົາໄດ້ຈົດຈໍ່ຢູ່ທີ່ນັ້ນ, ດັ່ງທີ່ອາຈານໂປໂລກ່າວວ່າ: “ພວກເຮົາມີຄວາມຫວັງນີ້ເປັນສະໝໍ່ອັນໝັ້ນຄົງ ແລະ ແນ່ນອນຂອງຈິດໃຈ. ຄວາມຫວັງນີ້ເຂົ້າສູ່ບ່ອນສັກສິດຊັ້ນໃນທາງຫຼັງຜ້ານັ້ງ, ບ່ອນທີ່ພຣະເຢຊູເຈົ້າຜູ້ໄດ້ນຳໜ້າພວກເຮົາ ໄດ້ເຂົ້າໄປກ່ອນແລ້ວເພື່ອພວກເຮົາ. ພຣະອົງຈຶ່ງໄດ້ເປັນມະຫາປະໂຣຫິດຕະຫຼອດໄປ.” (ເຮັບເຣີ 6:19, 20 LCV). “ພຣະອົງສະເດັດເຂົ້າໄປໃນທີ່ບໍຣິສຸດພຽງຄັ້ງດຽວເທົ່ານັ້ນ ແລະ ພຣະອົງບໍ່ໄດ້ຊົງນຳເລືອດແບ້ ແລະ ເລືອດລູກງົວເຂົ້າໄປ ແຕ່ຊົງນຳພຣະໂລຫິດຂອງພຣະອົງເອງເຂົ້າໄປ ແລະ ຊົງສຳເລັດການໄຖ່ບາບຊົ່ວນິຣັນແກ່ພວກເຮົາ.” (ເຮັບເຣີ 9:12 ດັດແປງຈາກສະບັບ TKJV). {GC 421.1}

ການປະຕິບັດໜ້າທີ່ໃນຫ້ອງທຳອິດຂອງສະຖານນະມັດສະການໃນສະຫວັນ ໄດ້ດຳເນີນຕໍ່ໄປເປັນເວລາ 18 ສະຕະວັດ. ພຣະຄຣິສຊົງວິງວອນຕໍ່ພຣະບິດາເພື່ອຜູ້ທີ່ເຊື່ອ ແລະ ສຳນຶກໃນຄວາມຜິດບາບ ໂດຍອ້າງເຖິງພຣະໂລຫິດຂອງພຣະອົງ. ດ້ວຍເຫດນີ້, ພວກເຂົາຈຶ່ງໄດ້ຮັບການອະໄພ ແລະ ການຍອມຮັບຈາກພຣະບິດາ. ແຕ່ເຖິງຢ່າງນັ້ນ, ຄວາມບາບຂອງພວກເຂົາກໍຍັງຄົງຖືກບັນທຶກໄວ້ຢູ່. ໃນລະບົບພິທີກຳຂອງຫໍເຕັນສັກສິດອັນເປັນສັນຍະລັກນັ້ນ ມີການລຶບລ້າງບາບໃນຕອນທ້າຍປີ; ເຊັ່ນດຽວກັນ, ກ່ອນທີ່ພາລະກິດຂອງພຣະຄຣິສໃນການໄຖ່ມະນຸດໃຫ້ລອດຈະສິ້ນສຸດລົງ ກໍມີວຽກງານລຶບລ້າງບາບ ເພື່ອເອົາຄວາມບາບອອກຈາກສະຖານນະມັດສະການໃນສະຫວັນ. ນີ້ແມ່ນຂະບວນການ

ທີ່ເລີ່ມຕົ້ນເມື່ອສິ້ນສຸດ 2,300 ວັນແຫ່ງຄຳພະຍາກອນ.[4] ໃນເວລານັ້ນ, ຕາມທີ່ຜູ້ເຜີຍພຣະທຳດານີເອນ ທຳນວາຍໄວ້ ມະຫາປະໂຣຫິດຂອງພວກເຮົາໄດ້ເຂົ້າໄປໃນສະຖານທີ່ສັກສິດທີ່ສຸດ. ພຣະອົງເຂົ້າໄປ ເພື່ອປະຕິບັດພາກສ່ວນສຸດທ້າຍຂອງພາລະກິດອັນສັກສິດ ໃນການຊຳລະສະຖານນະມັດສະການໃຫ້ ບໍຣິສຸດ. *{GC 421.2}*

ການພິພາກສາ

ໃນສະໄໝບູຮານ, ຄວາມບາບຂອງປະຊາຊົນໄດ້ຖືກວາງໄວ້ເທິງເຄື່ອງບູຊາໄຖ່ບາບດ້ວຍຄວາມເຊື່ອ, ແລະໂດຍຜ່ານເລືອດຂອງເຄື່ອງບູຊານັ້ນ ຄວາມບາບດັ່ງກ່າວໄດ້ຖືກຖ່າຍໂອນໄປຍັງຫໍເຕັນສັກສິດ ເຊິ່ງ ລ້ອນແຕ່ມີຄວາມໝາຍເປັນສັນຍະລັກ. ໃນພັນທະສັນຍາໃໝ່ກໍເຊັ່ນດຽວກັນ, ຄວາມບາບຂອງຜູ້ທີ່ ກັບໃຈໃໝ່ກໍຖືກວາງໄວ້ເທິງພຣະຄຣິສດ້ວຍຄວາມເຊື່ອ ແລະ ຖືກຖ່າຍໂອນຢ່າງແທ້ຈິງໄປຍັງສະຖານ ນະມັດສະການໃນສະຫວັນ ເຊິ່ງມີການເອີ້ນອີກແບບໜຶ່ງວ່າ "ສະຖານບໍຣິສຸດ." ການຊຳລະຫໍເຕັນສັກສິດ ອັນເປັນສັນຍະລັກນັ້ນ ໄດ້ສຳເລັດລົງດ້ວຍການເອົາຄວາມບາບ ທີ່ເຮັດໃຫ້ສະຖານທີ່ດັ່ງກ່າວເປັນມົນທິນ ອອກໄປ. ເຊັ່ນດຽວກັນ, ການຊຳລະສະຖານນະມັດສະການໃນສະຫວັນ ກໍຈະສຳເລັດໂດຍການເອົາ ຄວາມບາບທີ່ຖືກບັນທຶກໄວ້ທີ່ນັ້ນອອກໄປ. ແຕ່ກ່ອນທີ່ຈະລຶບຄວາມບາບເຫຼົ່ານັ້ນອອກໄປໄດ້, ຕ້ອງມີການ ກວດສອບປຶ້ມບັນທຶກ ເພື່ອຈະຮູ້ວ່າຜູ້ໃດຫັນໄປຈາກຄວາມບາບ ແລະ ມີຄວາມເຊື່ອໃນພຣະຄຣິສ ຈຶ່ງ ມີສິດເຂົ້າເຖິງການລຶບລ້າງຄວາມບາບ ທີ່ພຣະອົງຊົງກະທຳເພື່ອມະນຸດ. ສະນັ້ນ, ການຊຳລະສະຖານ ນະມັດສະການ ຈຶ່ງກ່ຽວຂ້ອງກັບວຽກງານສືບສວນ ເຊິ່ງເປັນວຽກງານແຫ່ງການພິພາກສາ. ວຽກງານນີ້ ຕ້ອງດຳເນີນກ່ອນການສະເດັດມາຂອງພຣະຄຣິສ ເພື່ອຮັບເອົາໄພ່ພົນທີ່ພຣະອົງຊົງໄຖ່; ດ້ວຍວ່າ, ເມື່ອ ພຣະອົງສະເດັດມາ ພຣະອົງຈະຊົງນຳບຳເໜັດມານຳ "ເພື່ອຕອບແທນຕາມການປະຕິບັດຂອງແຕ່ລະ ຄົນ." (ພຣະນິມິດ 22:12). *{GC 421.3}*

ດັ່ງນັ້ນ, ຜູ້ທີ່ຕິດຕາມແສງສະຫວ່າງແຫ່ງຄຳພະຍາກອນຈຶ່ງເຫັນວ່າ ແທນທີ່ພຣະຄຣິສຈະສະເດັດ ມາຍັງໂລກນີ້ໃນປີ 1844 ເມື່ອສິ້ນສຸດ 2,300 ວັນ, ພຣະອົງກໍສະເດັດເຂົ້າໄປໃນສະຖານທີ່ສັກສິດ ທີ່ສຸດຂອງສະຖານນະມັດສະການໃນສະຫວັນ ເພື່ອປະກອບພາລະກິດສຸດທ້າຍແຫ່ງການລຶບລ້າງຄວາມ ບາບ ອັນເປັນການກຽມພ້ອມສຳລັບການສະເດັດມາຂອງພຣະອົງ. *{GC 422.1}*

ນອກຈາກນັ້ນ, ພວກທີ່ຄົ້ນຄວ້າພຣະຄຳພີຍັງໄດ້ເຫັນວ່າ ເຄື່ອງບູຊາໄຖ່ບາບເລັ່ງໄປທີ່ພຣະຄຣິສ ຜູ້ສະຫຼະພຣະອົງດັ່ງເຄື່ອງບູຊາ; ແລະເຫັນວ່າ ມະຫາປະໂຣຫິດເປັນສັນຍະລັກຂອງພຣະຄຣິສ ໃນ ຖານະຄົນກາງລະຫວ່າງມະນຸດກັບພຣະເຈົ້າ. ສ່ວນແບ້ຮັບບາບນັ້ນ ເປັນສັນຍະລັກຂອງຊາຕານຜູ້ເປັນ ຕົ້ນກຳເນີດຂອງຄວາມບາບ; ສະນັ້ນ, ບາບຂອງຜູ້ທີ່ກັບໃຈຢ່າງແທ້ຈິງ ຈະຖືກວາງໄວ້ເທິງຊາຕານ ໃນທີ່ສຸດ. ເມື່ອມະຫາປະໂຣຫິດເອົາບາບອອກຈາກຫໍເຕັນສັກສິດ ໂດຍອາໄສເລືອດຂອງເຄື່ອງບູຊາໄຖ່ ບາບ, ເພິ່ນກໍວາງບາບເຫຼົ່ານັ້ນໄວ້ເທິງແບ້ຮັບບາບ. ເຊັ່ນດຽວກັນ, ເມື່ອພຣະຄຣິສເອົາຄວາມບາບຂອງ ໄພ່ພົນຂອງພຣະອົງ ອອກຈາກສະຖານນະມັດສະການໃນສະຫວັນ ໂດຍອາໄສພຣະໂລຫິດຂອງພຣະອົງ ເອງ ໃນຕອນສິ້ນສຸດການປະຕິບັດໜ້າທີ່ມະຫາປະໂຣຫິດຂອງພຣະອົງ, ພຣະອົງຈະວາງຄວາມບາບ ເຫຼົ່ານັ້ນໄວ້ເທິງຊາຕານ ຜູ້ຕ້ອງຮັບໂທດຄັ້ງສຸດທ້າຍໃນການພິພາກສາ. ແບ້ຮັບບາບຖືກສົ່ງອອກໄປໃນ ຖິ່ນແຫ້ງແລ້ງກັນດານ ບ່ໍໃຫ້ກັບຄືນມາຫາຊຸມຊົນອິດສະຣາເອນອີກ. ເຊັ່ນດຽວກັນ, ຊາຕານຈະຖືກ ຂັບໄລ່ອອກໄປໃຫ້ພົ້ນພຣະພັກພຣະເຈົ້າ ແລະ ໄພ່ພົນຂອງພຣະອົງຕະຫຼອດໄປ ແລະ ມັນຈະຖືກ ທຳລາຍໃຫ້ສິ້ນໄປໃນການກຳຈັດຄວາມບາບ ແລະ ຄົນບາບຄັ້ງສຸດທ້າຍ. *{GC 422.2}*

[4] ກໍຄື ຄ.ສ. 1844.

ໃນສະຖານທີ່ສັກສິດທີ່ສຸດມີຫີບພັນທະສັນຍາຕັ້ງຢູ່, ເຊິ່ງເຮັດດ້ວຍໄມ້ທີ່ມີລາຄາແພງ ແລະ ຫຸ້ມຫໍ່ດ້ວຍ ຄຳ, ເປັນບ່ອນເກັບແຜ່ນຫີນສອງແຜ່ນ ທີ່ພຣະເຈົ້າຊົງຈາລຶກພຣະບັນຍັດສິບປະການໄວ້.

ເບິ່ງໜ້າ 331.

Image generated with AI (Google Gemini).

24

ໃນສະຖານທີ່ສັກສິດທີ່ສຸດ

ລະບົບຄວາມຈິງທີ່ສົມບູນ

ຄວາມເຂົ້າໃຈເລື່ອງສະຖານນະມັດສະການ ເປັນກະແຈທີ່ໄຂຄວາມເລິກລັບຂອງຄວາມຜິດຫວັງໃນ ປີ 1844. ມັນເປີດເຜີຍລະບົບຄວາມຈິງທີ່ສົມບູນ ເຊິ່ງມີອົງປະກອບທີ່ເຊື່ອມໂຍງ ແລະ ສອດຄ່ອງ ກັນ; ສະແດງໃຫ້ເຫັນວ່າ, ພຣະຫັດຂອງພຣະເຈົ້າໄດ້ນຳພາຂະບວນການປະກາດເລື່ອງການສະເດັດມາ ຂອງພຣະຄຣິສ. ຄວາມເຂົ້າໃຈໃນເລື່ອງສະຖານນະມັດສະການ ໄດ້ເປີດເຜີຍໜ້າທີ່ໃນປັດຈຸບັນ ໂດຍການ ຊີ້ໃຫ້ເຫັນເຖິງສະຖານະ ແລະ ວຽກງານຂອງໄພ່ພົນຂອງພຣະອົງ. ຫຼັງຈາກຄ່ຳຄືນອັນແສນສາຫັດແຫ່ງ ຄວາມທຸກທໍລະມານ ແລະ ຄວາມຜິດຫວັງຂອງພວກສາວົກຂອງພຣະເຢຊູນັ້ນ ກໍກາຍເປັນ “ຄວາມ ຊື່ນຊົມຍິນດີ” ເມື່ອພວກເຂົາເຫັນພຣະອົງ. (ໂຢຮັນ 20:20 LCV). ບັດນີ້ ຜູ້ທີ່ລໍຖ້າການສະເດັດມາຄັ້ງ ທີສອງຂອງພຣະອົງດ້ວຍຄວາມເຊື່ອ ກໍພາກັນຊົມຊື່ນຍິນດີເຊັ່ນກັນ. ພວກເຂົາຄາດຫວັງວ່າ ພຣະອົງຈະ ສະເດັດມາປາກົດໃນສະຫງ່າຣາສີ ເພື່ອໃຫ້ບຳເໜັດແກ່ຜູ້ຮັບໃຊ້ຂອງພຣະອົງ. ເມື່ອຕ້ອງປະສົບກັບຄວາມ ຜິດຫວັງ ພວກເຂົາບໍ່ສາມາດເຫັນພຣະເຢຊູດ້ວຍສາຍຕາແຫ່ງຄວາມເຊື່ອ; ພວກເຂົາຈຶ່ງຮ້ອງໄຫ້ອອກ ມາ ເໝືອນນາງມາຣີທີ່ອຸບມຸງຝັງສົບຂອງພຣະເຢຊູທີ່ກ່າວວ່າ: “ພວກເຂົາໄດ້ເອົາອົງພຣະຜູ້ເປັນເຈົ້າຂອງ ຂ້ານ້ອຍໄປແລ້ວ ແລະ ຂ້ານ້ອຍບໍ່ຮູ້ຈັກວ່າ ພວກເຂົາເອົາພຣະອົງໄປໄວ້ຢູ່ໃສ.” (ໂຢຮັນ 20:13 LCV). ບັດນີ້ກຸ່ມແອັດເວັນຕິສໄດ້ເຫັນພຣະອົງໃນສະຖານທີ່ສັກສິດທີ່ສຸດດ້ວຍຄວາມເຊື່ອ, ພຣະອົງກຳລັງເຮັດ ໜ້າທີ່ມະຫາປະໂຣຫິດ ຜູ້ປ່ຽມດ້ວຍຄວາມເມດຕາ; ແລະໃນເວລາອີກບໍ່ດົນພຣະອົງຈະສະເດັດມາ ປາກົດໃນຖານະກະສັດ ແລະ ຈະຊ່ວຍພວກເຂົາໃຫ້ພົ້ນ. ແສງສະຫວ່າງຈາກສະຖານນະມັດສະການ ໃນສະຫວັນ ໄດ້ສ່ອງແຈ້ງໄປຍັງອະດີດ, ປັດຈຸບັນ ແລະ ອະນາຄົດ. ພວກເຂົາຮູ້ວ່າພຣະເຈົ້າຊົງ ນຳພາພວກເຂົາດ້ວຍພຣະປະສົງອັນແນ່ນອນໂດຍບໍ່ຜິດພາດ. ເຖິງແມ່ນວ່າ ພວກເຂົາບໍ່ຕ່າງຫຍັງກັບ ພວກສາວົກລຸ້ນທຳອິດ ທີ່ບໍ່ເຂົ້າໃຈຂ່າວສານທີ່ຕົນເອງເປັນຜູ້ປະກາດ, ແຕ່ຖ້ອຍຄຳເຫຼົ່ານັ້ນຖືກຕ້ອງ ທຸກປະການ. ການປະກາດຂ່າວສານຂອງພວກເຂົານັ້ນ ເປັນໄປຕາມພຣະປະສົງຂອງພຣະເຈົ້າ, ແລະ ໃນອົງພຣະຜູ້ເປັນເຈົ້າ ວຽກງານເຫຼົ່ານັ້ນກໍບໍ່ໄດ້ສູນເປົ່າ. ພວກເຂົາມີ “ຄວາມຍິນດີອັນຍິ່ງໃຫຍ່ ຈົນ ບໍ່ສາມາດຈະບັນລະຍາຍໄດ້” ເພາະວ່າໄດ້ “ບັງເກີດໃໝ່ເຂົ້າໃນຄວາມຫວັງອັນມີຊີວິດ.” (1 ເປໂຕ 1:8, 3 LCV). *{GC 423.1}*

ຄຳພະຍາກອນໃນດານີເອນ 8:14 ກ່າວວ່າ “ຢູ່ມາ 2,300 ວັນ ແລ້ວສະຖານບໍຣິສຸດນັ້ນ ຈະໄດ້ຮັບການຊຳລະ.” (ດັດແປງຈາກສະບັບ TKJV). ສ່ວນຂ່າວຂອງທູດສະຫວັນອົງທີໜຶ່ງກ່າວ ວ່າ “ຈົ່ງຢຳເກງພຣະເຈົ້າ ແລະ ຖວາຍກຽດຕິຍົດແກ່ພຣະອົງ ເພາະວ່າເວລາແຫ່ງການພິພາກສາ ຂອງພຣະອົງໄດ້ມາເຖິງແລ້ວ.” (ພຣະນິມິດ 14:7 LCV). ທັງສອງຂໍ້ນີ້ ຕ່າງຊີ້ໄປຍັງການປະຕິບັດ

ໜ້າທີ່ຂອງພຣະຄຣິສ ໃນສະຖານທີ່ສັກສິດທີ່ສຸດ ແລະ ການພິພາກສາແບບສືບສວນ, ບໍ່ແມ່ນເຖິງ ການສະເດັດມາຂອງພຣະຄຣິສ ເພື່ອຊ່ວຍໄພ່ພົນຂອງພຣະອົງໃຫ້ລອດ ແລະ ທຳລາຍຄົນຊົ່ວໃຫ້ ພິນາດ. ຄວາມຜິດພາດຂອງພວກເຂົາ ບໍ່ໄດ້ຢູ່ທີ່ການຄຳນວນໄລຍະເວລາຂອງຄຳພະຍາກອນ, ແຕ່ ຢູ່ທີ່*ເຫດການ*ທີ່ຈະເກີດຂຶ້ນໃນຕອນທ້າຍຂອງ 2,300 ວັນນັ້ນ. ຍ້ອນຄວາມຜິດພາດນີ້ ຜູ້ທີ່ເຊື່ອຈຶ່ງ ໄດ້ຮັບຄວາມຜິດຫວັງ; ແຕ່ເຖິງຢ່າງນັ້ນ, ທຸກສິ່ງທີ່ຄຳພະຍາກອນໄດ້ທຳນວາຍໄວ້ ແລະ ຄວາມ ຄາດຫວັງທຸກຢ່າງຂອງພວກເຂົາທີ່ກົງກັບພຣະຄຳພີ ກໍໄດ້ສຳເລັດແລ້ວ. ໃນຂະນະທີ່ພວກເຂົາກຳລັງ ໂສກເສົ້າເພາະຄວາມຜິດຫວັງນັ້ນ ເຫດການທີ່ຂ່າວສານໄດ້ທຳນວາຍໄວ້ກໍໄດ້ເກີດຂຶ້ນແລ້ວ ເຊິ່ງເຫດການ ເຫຼົ່ານັ້ນ ກໍຕ້ອງສຳເລັດກ່ອນທີ່ອົງພຣະຜູ້ເປັນເຈົ້າຈະສະເດັດມາ ເພື່ອປະທານບຳເໜັດແກ່ຜູ້ຮັບໃຊ້ຂອງ ພຣະອົງ. *{GC 424.1}*

ພຣະຄຣິສບໍ່ໄດ້ສະເດັດມາຍັງໂລກ ຕາມທີ່ພວກເຂົາຄາດຫວັງ, ແຕ່ໄດ້ສະເດັດໄປຍັງສະຖານທີ່ ສັກສິດທີ່ສຸດໃນພຣະວິຫານຂອງພຣະເຈົ້າໃນສະຫວັນ ຕາມທີ່ເງົາສັນຍະລັກໄດ້ຊີ້ບອກໄວ້ລ່ວງໜ້າ. ຜູ້ເຜີຍພຣະທຳດານີເອນ ໄດ້ບັນລະຍາຍເຖິງຕອນທີ່ພຣະຄຣິສສະເດັດໄປຫາຜູ້ມີຊີວິດຢູ່ຕະຫຼອດໄປ ວ່າ: “ຂ້າພະເຈົ້າເຫັນໃນນິມິດກາງຄືນ ແລະ ເບິ່ງແມ! ມີທ່ານຜູ້ໜຶ່ງເໝືອນບຸດມະນຸດ ມາພ້ອມກັບ ໝູ່ເມກແຫ່ງຟ້າສະຫວັນ;” ພຣະອົງບໍ່ໄດ້ສະເດັດມາຍັງແຜ່ນດິນໂລກ ແຕ່ “ເພິ່ນມາຫາຜູ້ຈະເລີນດ້ວຍ ໄວຍະວຸດນັ້ນ ພວກເຂົານຳເພິ່ນມາເຝົ້າຕໍ່ເບື້ອງພຣະພັກຂອງພຣະອົງ.” (ດານີເອນ 7:13 ດັດແປງຈາກ ສະບັບ TKJV). *{GC 424.2}*

ການສະເດັດມາຂອງພຣະອົງໃນຄັ້ງນີ້ ຍັງໄດ້ຖືກທຳນວາຍໄວ້ລ່ວງໜ້າ ໂດຍຜູ້ເຜີຍພຣະທຳມາລາກີ ເຊັ່ນກັນ ໂດຍເພິ່ນກ່າວວ່າ: “ອົງພຣະຜູ້ເປັນເຈົ້າອົງຊົງຣິດອຳນາດຍິ່ງໃຫຍ່ຕອບວ່າ, ‘ອົງພຣະຜູ້ເປັນເຈົ້າ ຜູ້ທີ່ພວກເຈົ້າພວມຊອກຫານັ້ນ ກໍຈະມາຍັງພຣະວິຫານໃນທັນໃດ. ຜູ້ແຈ້ງຂ່າວທີ່ພວກເຈົ້າຢາກ ເຫັນນັ້ນຈະມາ ແລະ ປະກາດພັນທະສັນຍາຂອງເຮົາ.’” (ມາລາກີ 3:1 LO2012). ການທີ່ ພຣະຄຣິສສະເດັດມາຍັງພຣະວິຫານຂອງພຣະອົງນັ້ນ ເປັນໄປຢ່າງກະທັນຫັນ ແລະ ເປັນເລື່ອງ ທີ່ບໍ່ຄາດຄິດສຳລັບໄພ່ພົນຂອງພຣະອົງ. ພວກເຂົາບໍ່ໄດ້ຄາດຄະເນວ່າຈະພົບພຣະອົງ*ຢູ່ທີ່ນັ້ນ*, ແຕ່ ໄດ້ຄາດຫວັງວ່າພຣະອົງຈະສະເດັດມາຍັງໂລກ “ໃນແປວໄຟ, ຈະລົງໂທດສະໜອງຄົນເຫຼົ່ານັ້ນທີ່ ບໍ່ຮູ້ຈັກພຣະເຈົ້າ ແລະ ແກ່ຄົນທີ່ບໍ່ເຊື່ອຟັງຂ່າວປະເສີດ.” (2 ເທສະໂລນິກ 1:8 ດັດແປງຈາກ ສະບັບ TKJV). *{GC 424.3}*

ແຕ່ຜູ້ເຊື່ອໃນການສະເດັດມາຂອງພຣະຄຣິສຍັງບໍ່ພ້ອມທີ່ຈະຕ້ອນຮັບພຣະອົງ. ພວກເຂົາຍັງຕ້ອງ ກຽມພ້ອມກ່ອນ, ຕ້ອງໄດ້ຮັບແສງສະຫວ່າງເພີ່ມເຕີມອີກ ເພື່ອໃຫ້ພວກເຂົາຫັນມາພິຈາລະນາເລື່ອງ ພຣະວິຫານຂອງພຣະເຈົ້າໃນສະຫວັນ. ໃນຂະນະທີ່ພວກເຂົາຕິດຕາມພຣະເຢຊູດ້ວຍຄວາມເຊື່ອ ໃນການ ທີ່ພຣະອົງຊົງປະຕິບັດໜ້າທີ່ໃນຖານະມະຫາປະໂຣຫິດ, ພຣະອົງຈະເປີດເຜີຍໜ້າທີ່ໃໝ່ໃຫ້ແກ່ພວກເຂົາ. ມີຄຳຕັກເຕືອນ ແລະ ຄຳສັ່ງສອນອີກຢ່າງໜຶ່ງທີ່ຈະຕ້ອງນຳໄປກ່າວແກ່ຄຣິສຕະຈັກ. *{GC 424.4}*

ຜູ້ໃດຈະຢືນຢູ່ໄດ້

ຜູ້ເຜີຍພຣະທຳມາລາກີກ່າວວ່າ: “ແຕ່ໃຜຈະທົນຢູ່ໄດ້ໃນວັນທີ່ເພິ່ນມາ ແລະ ໃຜຈະຢືນໝັ້ນຢູ່ ໄດ້ເມື່ອເພິ່ນປາກົດຕົວ ເພາະວ່າເພິ່ນເປັນເໝືອນໄຟຖະຫຼຸ[1]ແຮ່ ແລະ ເປັນເໝືອນສະບູຂອງຊ່າງ ຊັກເຄື່ອງ. ເພິ່ນຈະນັ່ງລົງຢ່າງຊ່າງຫຼອມໂລຫະ ແລະ ຊ່າງຖະຫຼຸງເງິນ ແລະ ເພິ່ນຈະຊຳລະ ລູກຫຼານຂອງເລວີໃຫ້ບໍຣິສຸດ ແລະ ຖະຫຼຸງພວກເຂົາເໝືອນຢ່າງຖະຫຼຸງເງິນ ແລະ ຖະຫຼຸງຄຳ ເພື່ອ

[1] ໝາຍເຖິງການໃຊ້ຄວາມຮ້ອນ ເພື່ອເຜົາສິ່ງເຈືອປົນອອກຈາກແຮ່ດິບ ໃຫ້ເຫຼືອແຕ່ແຮ່ບໍຣິສຸດ.

ພວກເຂົາຈະໄດ້ນຳເຄື່ອງບູຊາອັນຊອບທຳຖວາຍແດ່ພຣະເຢໂຮວາ.” (ມາລາກີ 3:2, 3 ດັດແປງຈາກ ສະບັບ TKJV). ເມື່ອການອ້ອນວອນຂອງພຣະຄຣິສໃນສະຖານນະມັດສະການໃນສະຫວັນສິ້ນສຸດລົງ, ຜູ້ ທີ່ຍັງມີຊີວິດຢູ່ເທິງໂລກ ຈະຕ້ອງຢືນຢູ່ຕໍ່ພຣະພັກພຣະເຈົ້າຜູ້ບໍຣິສຸດໂດຍບໍ່ມີຄົນກາງ. ອຸປະນິໄສຂອງ ພວກເຂົາຕ້ອງບໍຣິສຸດປາສະຈາກຮອຍດ່າງພອຍ, ເໝືອນດັ່ງເສື້ອຄຸມຍາວທີ່ສະອາດບໍຣິສຸດ; ອຸປະນິໄສ ຕ້ອງຖືກຊຳລະໃຫ້ບໍຣິສຸດຈາກຄວາມຜິດບາບ ໂດຍຄວາມເຊື່ອໃນພຣະໂລຫິດຂອງພຣະຄຣິສ. ພວກເຂົາ ຕ້ອງຕໍ່ສູ້ກັບຄວາມຊົ່ວຮ້າຍ ຈົນໄດ້ຮັບໄຊຊະນະດ້ວຍພຣະຄຸນຂອງພຣະເຈົ້າ ແລະ ຄວາມພະຍາຍາມ ຢ່າງບໍ່ລົດລະຂອງຕົນເອງ. ໃນຂະນະທີ່ການພິພາກສາແບບສືບສວນກຳລັງດຳເນີນຢູ່ໃນສະຫວັນ ແລະ ຄວາມບາບຂອງຜູ້ເຊື່ອທີ່ກັບໃຈຖືກລຶບລ້າງອອກຈາກສະຖານນະມັດສະການ ຍັງມີວຽກງານພິເສດໃນ ການຊຳລະໃຫ້ບໍຣິສຸດ; ຕ້ອງມີການກຳຈັດຄວາມບາບອອກຈາກທ່າມກາງປະຊາກອນຂອງພຣະເຈົ້າໃນ ໂລກ. ມີການອະທິບາຍວຽກງານນີ້ຢ່າງຈະແຈ້ງຍິ່ງຂຶ້ນ ໃນຂ່າວທູດສະຫວັນສາມອົງໃນພຣະນິມິດບົດ ທີ 14. *{GC 425.1}*

ເມື່ອວຽກງານນີ້ສຳເລັດແລ້ວ ຜູ້ຕິດຕາມພຣະຄຣິສກໍຈະພ້ອມສຳລັບການສະເດັດມາຂອງພຣະ-ອົງ. “ແລ້ວເຄື່ອງຖວາຍບູຊາທີ່ປະຊາຊົນຢູດາ ແລະ ເຢຣູຊາເລັມນຳມາຖວາຍແກ່ອົງພຣະຜູ້ເປັນເຈົ້າ ນັ້ນ ກໍຈະເປັນທີ່ພໍໃຈພຣະອົງ ດັ່ງເຄື່ອງບູຊາຂອງພວກເຂົາທີ່ເຄີຍເປັນມາແຕ່ຄາວກ່ອນ.” (ມາລາກີ 3:4 LO2012). ເມື່ອນັ້ນ, ຄຣິສຕະຈັກທີ່ອົງພຣະຜູ້ເປັນເຈົ້າຂອງພວກເຮົາຈະຮັບໄປຢູ່ນຳພຣະອົງ ເມື່ອພຣະອົງສະເດັດກັບມາ ຈະເປັນ “ຄຣິສຕະຈັກທີ່ມີສະຫງ່າຣາສີ ບໍ່ມີຈຸດດ່າງພອຍ ຫຼື ຮອຍ ໜ້ຽວແຫ້ງ ແລະ ສິ່ງອື່ນໆ ໃນທຳນອງນັ້ນ.” (ເອເຟໂຊ 5:27). ໃນເວລານັ້ນ, ຄຣິສຕະຈັກຈະ ປາກົດ “ດັ່ງຮຸ່ງອາລຸນຕອນເຊົ້າ, ນາງຊ່າງງາມແທ້ ແລະ ບໍຣິສຸດຜຸດຜ່ອງ ດັ່ງຕາເວັນ ແລະ ດວງ ເດືອນສ່ອງແຈ້ງເຫຼື້ອມໃສ.” (ເພງ 6:10). *{GC 425.2}*

ນອກຈາກເລື່ອງການສະເດັດຂອງອົງພຣະຜູ້ເປັນເຈົ້າມາສູ່ພຣະວິຫານຂອງພຣະອົງແລ້ວ, ຜູ້ເຜີຍ-ພຣະທຳມາລາກີ ກໍຍັງໄດ້ພະຍາກອນເຖິງການສະເດັດມາຄັ້ງທີສອງຂອງພຣະອົງອີກດ້ວຍ ເຊິ່ງເປັນການ ສະເດັດມາເພື່ອພິພາກສາລົງໂທດ, ໂດຍເພີ່ນໃຊ້ຖ້ອຍຄຳດັ່ງນີ້ວ່າ: “ອົງພຣະຜູ້ເປັນເຈົ້າອົງຊົງຣິດອຳນາດ ຍິ່ງໃຫຍ່ກ່າວວ່າ, ‘ເຮົາຈະມາປາກົດຢູ່ທ່າມກາງພວກເຈົ້າເພື່ອຕັດສິນ, ແລະເຮົາຈະເປັນພະຍານຕໍ່ສູ້ ພວກທີ່ລົ້ງມືຝຶກເວດມົນຄາຖາ, ຕໍ່ສູ້ພວກທີ່ຫຼິ້ນຊູ້ສູ່ເມຶອເມຍ, ຕໍ່ສູ້ພວກທີ່ເປັນພະຍານບໍ່ຈິງ, ຕໍ່ສູ້ພວກ ທີ່ສໍ້ໂກງຄ່າແຮງງານຂອງລູກຈ້າງ, ຕໍ່ສູ້ພວກທີ່ເອົາປຽບແມ່ໝ້າຍ, ເດັກກຳພ້າ ແລະ ຄົນຕ່າງດ້າວ ຄື ຕໍ່ສູ້ທຸກຄົນທີ່ບໍ່ຢຳເກງເຮົາ.’” (ມາລາກີ 3:5 LO2012). ທ່ານຢູດາໄດ້ກ່າວເຖິງເຫດການດຽວກັນນີ້ ວ່າ, “ອົງພຣະຜູ້ເປັນເຈົ້າຈະສະເດັດມາພ້ອມຝູງເທວະດາຕົນບໍຣິສຸດຂອງພຣະອົງນັບເປັນໝື່ນໆ, ເພື່ອ ຈະນຳເອົາການຕັດສິນມາສູ່ທຸກໆຄົນ ຄືລົງໂທດທຸກຄົນສຳລັບການກະທຳຊົ່ວທຸກຢ່າງ ທີ່ພວກເຂົາ ໄດ້ເຮັດໃນການບໍ່ຢຳເກງພຣະເຈົ້າ.” (ຢູດາ 14, 15). ການສະເດັດມາທີ່ກ່າວເຖິງໃນຂໍ້ພຣະຄຳ ເຫຼົ່ານີ້ ແລະ ການສະເດັດໄປຍັງພຣະວິຫານຂອງພຣະອົງ ເປັນສອງເຫດການທີ່ແຕກຕ່າງກັນຢ່າງ ຊັດເຈນ. *{GC 425.3}*

ເບິ່ງແມ! ເຈົ້າບ່າວມາແລ້ວ

ມີສີ່ຕົວຢ່າງໃນພຣະຄຳພີທີ່ອະທິບາຍເຖິງເຫດການດຽວກັນ: 1) ການສະເດັດຂອງພຣະຄຣິສມາ ສູ່ສະຖານທີ່ສັກສິດທີ່ສຸດໃນຖານະມະຫາປະໂຣຫິດຂອງພວກເຮົາ ເພື່ອຊຳລະສະຖານນະມັດສະການ (ດານີເອນ 8:14); 2) ການສະເດັດຂອງບຸດມະນຸດໄປຫາ “ຜູ້ມີຊີວິດຢູ່ຕະຫຼອດໄປ” (ດານີເອນ 7:13); ແລະ 3) ການສະເດັດຂອງອົງພຣະຜູ້ເປັນເຈົ້າ ມາສູ່ພຣະວິຫານຂອງພຣະອົງຕາມທີ່ມາລາກີ

ໄດ້ທຳນວາຍໄວ້. ນອກຈາກນັ້ນກໍຍັງມີຕົວຢ່າງທີ 4) ຄືຄຳອຸປະມາຂອງພຣະຄຣິສເລື່ອງຍິງສາວບໍຣິສຸດ ສິບຄົນໃນພຣະທຳມັດທາຍ ບົດທີ 25 ທີ່ກ່າວເຖິງການມາຂອງເຈົ້າບ່າວເພື່ອເຂົ້າພິທີແຕ່ງງານ ກໍຍັງ ເປັນຕົວຢ່າງຂອງເຫດການດຽວກັນນີ້. {GC 426.1}

ໃນລະດູຮ້ອນ ແລະ ລະດູໃບໄມ້ຫຼົ່ນຂອງປີ 1844, ມີການປະກາດວ່າ “ເບິ່ງແມ, ເຈົ້າບ່າວ ມາແລ້ວ.” (ມັດທາຍ 25:6 LO1972). ໃນຄາວນັ້ນ, ຄົນສອງກຸ່ມທີ່ເປັນຕົວແທນຂອງສາວບໍຣິສຸດ ທີ່ສະຫຼາດ ແລະ ສາວບໍຣິສຸດທີ່ໂງ່ຈ້າໄດ້ປາກົດຂຶ້ນ: ກຸ່ມໜຶ່ງຕັ້ງໜ້າລໍຄອຍການສະເດັດມາຂອງ ອົງພຣະຜູ້ເປັນເຈົ້າດ້ວຍຄວາມຊົ່ນຊື່ນຍິນດີ ແລະ ໄດ້ກະກຽມຢ່າງພາກພຽນທີ່ຈະພົບພຣະອົງ; ອີກ ກຸ່ມໜຶ່ງມີຄວາມຢ້ານກົວ ແລະ ເຮັດຕາມອາລົມຄວາມຮູ້ສຶກ. ສ່ວນກຸ່ມທີສອງນີ້ກໍພໍໃຈໃນການຮູ້ ທິດສະດີແຫ່ງຄວາມຈິງ ແຕ່ພວກເຂົາຂາດພຣະຄຸນຂອງພຣະເຈົ້າ. ໃນຄຳອຸປະມານັ້ນ, ເມື່ອເຈົ້າບ່າວ ມາເຖິງ “ພວກສາວບໍຣິສຸດທີ່ກຽມພ້ອມຢູ່ແລ້ວ ກໍເຂົ້າໄປກັບເຈົ້າບ່າວໃນງານກິນລ້ຽງສົມຣົດ.” (ມັດທາຍ 25:10 LCV). ການສະເດັດມາຂອງເຈົ້າບ່າວທີ່ກ່າວເຖິງນີ້ ເກີດຂຶ້ນກ່ອນພິທີແຕ່ງງານ. ພິທີແຕ່ງ ງານນັ້ນ ໝາຍເຖິງການທີ່ພຣະຄຣິສຊົງຮັບເອົາອານາຈັກຂອງພຣະອົງ. ພຣະຄຳພີກ່າວເຖິງອານາຈັກ ນັ້ນໃນພາບຂອງນະຄອນບໍຣິສຸດ ກໍຄືນະຄອນເຢຣູຊາເລັມໃໝ່ ອັນເປັນນະຄອນຫຼວງ ແລະ ຖືກ ເອີ້ນວ່າ “ເຈົ້າສາວ ຄູ່ສົມຣົດຂອງລູກແກະຂອງພຣະເຈົ້າ;” ຕາມທີ່ທູດສະຫວັນກ່າວແກ່ອັກຄະສາວົກ ໂຢຮັນວ່າ: “ເຊີນມາ, ເຮົາຈະໃຫ້ທ່ານເບິ່ງເຈົ້າສາວ ຄູ່ສົມຣົດຂອງລູກແກະຂອງພຣະເຈົ້າ.” (ພຣະນິມິດ 21:9 LCV). ທູດສະຫວັນອົງນັ້ນ “ໄດ້ນຳຂ້າພະເຈົ້າໂດຍພຣະວິນຍານ . . . ແລະໄດ້ສຳແດງໃຫ້ຂ້າພະເຈົ້າ ເຫັນເມືອງໃຫຍ່ນັ້ນ ຄືນະຄອນເຢຣູຊາເລັມອັນບໍຣິສຸດ ເຊິ່ງກຳລັງລອຍລົງມາຈາກສະຫວັນ ແລະ ຈາກ ພຣະເຈົ້າ.” (ພຣະນິມິດ 21:10 ດັດແປງຈາກສະບັບ TKJV). ດັ່ງນັ້ນ, ຈະເຫັນແລ້ວວ່າ ເຈົ້າສາວ ໝາຍເຖິງນະຄອນບໍຣິສຸດ ແລະ ສາວບໍຣິສຸດທີ່ອອກໄປຮັບເຈົ້າບ່າວໝາຍເຖິງຄຣິສຕະຈັກ. ພຣະທຳ ພຣະນິມິດກ່າວເຖິງປະຊາກອນຂອງພຣະເຈົ້າວ່າ ເປັນແຂກໃນງານລ້ຽງສົມຣົດ (ເບິ່ງ ພຣະນິມິດ 19:9). ຖ້າເປັນ*ແຂກ*, ສະແດງວ່າພວກເຂົາກໍບໍ່ສາມາດເປັນ*ເຈົ້າສາວ*ໃນເວລາດຽວກັນ. ດານີເອນໄດ້ກ່າວ ໄວ້ວ່າ ພຣະຄຣິສຈະໄດ້ຮັບ “ຣາຊອຳນາດ ສະຫງ່າຣາສີ ກັບຣາຊອານາຈັກ” ຈາກ “ຜູ້ຈະເລີນດ້ວຍ ໄວຍະວຸດ” ໃນສະຫວັນ. (ດານີເອນ 7:9, 14 TKJV). ພຣະອົງຈະຮັບນະຄອນເຢຣູຊາເລັມໃໝ່ ເປັນ ນະຄອນຫຼວງແຫ່ງອານາຈັກຂອງພຣະອົງ ເຊິ່ງ “ນະຄອນນີ້ໄດ້ຈັດຕຽມພ້ອມແລ້ວ ເໝືອນເຈົ້າສາວແຕ່ງ ຕົວໄວ້ເພື່ອພົບເຈົ້າບ່າວຂອງຕົນ.” (ພຣະນິມິດ 21:2). ເມື່ອໄດ້ຮັບອານາຈັກແລ້ວ ພຣະອົງຈະສະເດັດ ມາດ້ວຍສະຫງ່າຣາສີ, ເປັນພຣະມະຫາກະສັດເໜືອກະສັດທັງຫຼາຍ ແລະ ເປັນອົງພຣະຜູ້ເປັນເຈົ້າ ເໜືອເຈົ້ານາຍທັງປວງ, ເພື່ອຮັບເອົາປະຊາກອນຂອງພຣະອົງ. ຄົນເຫຼົ່ານັ້ນຈະ “ນັ່ງຮ່ວມໂຕ๊ະກັບ ອັບຣາຮາມ, ອີຊາກ ແລະ ຢາໂຄບ” ເພື່ອເຂົ້າຮ່ວມໃນງານລ້ຽງສົມຣົດຂອງພຣະເມສານ້ອຍ. (ມັດທາຍ 8:11; ເບິ່ງ ລູກາ 22:30). {GC 426.2}

ລໍຄອຍອົງພຣະຜູ້ເປັນເຈົ້າ

ການປະກາດວ່າ “ເບິ່ງແມ, ເຈົ້າບ່າວມາແລ້ວ” ໃນລະດູຮ້ອນປີ 1844 ເປັນເຫດໃຫ້ຄົນຈຳນວນ ຫຼວງຫຼາຍຄາດຫວັງວ່າ ອົງພຣະຜູ້ເປັນເຈົ້າຈະສະເດັດມາໃນທັນທີ. ເມື່ອເຖິງເວລາທີ່ກຳນົດໄວ້ ເຈົ້າບ່າວ ໄດ້ສະເດັດມາແທ້ ແຕ່ບໍ່ແມ່ນມາຍັງໂລກຕາມທີ່ຜູ້ຄົນຄາດຫວັງ. ພຣະອົງສະເດັດມາຫາຜູ້ມີຊີວິດຢູ່ ຕະຫຼອດໄປໃນສະຫວັນ ເພື່ອຮັບເອົາຣາຊອານາຈັກຂອງພຣະອົງໃນພິທີສົມຣົດ. “ພວກສາວບໍຣິສຸດທີ່ກຽມ ພ້ອມຢູ່ແລ້ວ ກໍເຂົ້າໄປກັບເຈົ້າບ່າວໃນງານກິນລ້ຽງສົມຣົດ ແລະ ປະຕູກໍອັດ.” (ມັດທາຍ 25:10 LCV).

ພວກເຂົາບໍ່ໄດ້ຢູ່ຮ່ວມໃນພິທີສົມຣົດນັ້ນດ້ວຍຕົນເອງ ເພາະມັນເກີດຂຶ້ນໃນສະຫວັນ ໃນຂະນະທີ່ພວກຕົນຍັງຢູ່ໃນໂລກ. ຜູ້ຕິດຕາມພຣະຄຣິສຕ້ອງ “ຄອຍຖ້າຮັບນາຍຂອງຕົນທີ່ຈະ*ກັບຈາກ*ງານລ້ຽງສະຫຼອງແຕ່ງງານ.” (ລູກາ 12:36 LCV). ແຕ່ພວກເຂົາຕ້ອງເຂົ້າໃຈວຽກງານຂອງພຣະອົງ ແລະ ຕິດຕາມພຣະອົງດ້ວຍຄວາມເຊື່ອ ໃນຂະນະທີ່ພຣະອົງສະເດັດເຂົ້າໄປຫາພຣະເຈົ້າ. ໃນມຸມນີ້ຈຶ່ງເວົ້າໄດ້ວ່າ ພວກເຂົາໄດ້ເຂົ້າຮ່ວມໃນພິທີແຕ່ງງານດັ່ງກ່າວ. *{GC 427.1}*

ໃນຄຳອຸປະມາ ຜູ້ທີ່ສາມາດເຂົ້າຮ່ວມໃນງານແຕ່ງງານນັ້ນ ຄືຜູ້ທີ່ມີນ້ຳມັນໃນຂວດພ້ອມກັບຕະກຽງຂອງຕົນ. ມີຄົນກຸ່ມໜຶ່ງທີ່ຮູ້ຈັກຄວາມຈິງໃນພຣະຄຳພີ, ມີພຣະວິນຍານ ແລະ ພຣະຄຸນຂອງພຣະເຈົ້າ. ພວກເຂົາໄດ້ລໍຖ້າຢ່າງອົດທົນໃນຄ່ຳຄືນແຫ່ງການທົດລອງອັນຂົມຂື່ນນັ້ນ ພ້ອມທັງໄດ້ຄົ້ນຄວ້າພຣະຄຳພີ ເພື່ອຫາຄວາມເຂົ້າໃຈທີ່ກະຈ່າງແຈ້ງຂຶ້ນ. ຈາກການຄົ້ນຄວ້ານີ້ ພວກເຂົາໄດ້ເຫັນຄວາມຈິງກ່ຽວກັບສະຖານນະມັດສະການໃນສະຫວັນ ແລະ ການປ່ຽນແປງພາລະໜ້າທີ່ຂອງພຣະຜູ້ຊ່ວຍໃຫ້ລອດ. ດ້ວຍຄວາມເຊື່ອ ພວກເຂົາຕິດຕາມພຣະອົງໃນການປະຕິບັດໜ້າທີ່ຂອງພຣະອົງໃນສະຖານນະມັດສະການເບື້ອງເທິງ. ຄົນທັງປວງທີ່ຍອມຮັບຄຳສອນໃນພຣະຄຳພີກ່ຽວກັບຄວາມຈິງເຫຼົ່ານີ້ ກໍຕິດຕາມພຣະຄຣິສດ້ວຍຄວາມເຊື່ອ. ພວກເຂົາເຊື່ອວ່າ ພຣະອົງສະເດັດເຂົ້າໄປປະຕິບັດໜ້າທີ່ຄັ້ງສຸດທ້າຍຕໍ່ພຣະພັກພຣະເຈົ້າໃນຖານະຄົນກາງ ແລະ ເມື່ອສຳເລັດພາລະກິດດັ່ງກ່າວແລ້ວ ພຣະອົງກໍຈະຮັບເອົາອານາຈັກຂອງພຣະອົງ. ຄົນທີ່ຕິດຕາມພຣະອົງດ້ວຍຄວາມເຊື່ອເຊັ່ນນີ້ແຫຼະ ຄືຜູ້ທີ່ເຂົ້າໄປໃນງານແຕ່ງງານຕາມຄຳອຸປະມາ. *{GC 427.2}*

ສິ້ນສຸດພາລະກິດໃນສະຖານນະມັດສະການ

ຄຳອຸປະມາໃນມັດທາຍບົດທີ 22 ມີການຍົກຕົວຢ່າງງານສົມຣົດເຊັ່ນກັນ ໂດຍມີຄວາມໝາຍຢ່າງຈະແຈ້ງວ່າ ການພິພາກສາແບບສືບສວນຈະເກີດຂຶ້ນກ່ອນພິທີແຕ່ງງານ. ກ່ອນງານສົມຣົດນັ້ນ ກະສັດໄດ້ສະເດັດເຂົ້າມາເບິ່ງບັນດາແຂກຄົນ ເພື່ອເບິ່ງວ່າທຸກຄົນໄດ້ນຸ່ງເຄື່ອງສຳລັບງານແຕ່ງຫຼືບໍ່. ເຄື່ອງດັ່ງກ່າວແມ່ນເສື້ອຄຸມຍາວອັນບໍຣິສຸດ ເຊິ່ງໝາຍເຖິງອຸປະນິໄສທີ່ໄດ້ຮັບການຊຳລະໃຫ້ຂາວສະອາດ ດ້ວຍພຣະໂລຫິດຂອງພຣະເມສານ້ອຍ. (ເບິ່ງ ມັດທາຍ 22:11; ພຣະນິມິດ 7:14). ຜູ້ທີ່ບໍ່ໄດ້ໃສ່ເສື້ອຄຸມນັ້ນກໍຖືກຂັບໄລ່ອອກໄປ; ໃນຂະນະດຽວກັນ, ພຣະເຈົ້າຈະຍອມຮັບຜູ້ທີ່ຖືກກວດພົບວ່ານຸ່ງເຄື່ອງສຳລັບງານແຕ່ງ ໂດຍຖືວ່າມີຄວາມຄູ່ຄວນທີ່ຈະມີສ່ວນໃນອານາຈັກຂອງພຣະອົງ ແລະ ຈະໄດ້ນັ່ງກັບພຣະອົງເທິງບັນລັງຂອງພຣະອົງ. ການພິພາກສາແບບສືບສວນຄືການກວດສອບອຸປະນິໄສເພື່ອຕັດສິນວ່າ ຜູ້ໃດກຽມພ້ອມສຳລັບອານາຈັກຂອງພຣະເຈົ້າ. ພາລະກິດນີ້ແມ່ນວຽກງານສຸດທ້າຍໃນສະຖານນະມັດສະການເທິງສະຫວັນ. *{GC 428.1}*

ເມື່ອວຽກງານການສືບສວນສິ້ນສຸດລົງ ແລະ ຄະດີຂອງທຸກຄົນທີ່ເຄີຍອ້າງວ່າເປັນຜູ້ຕິດຕາມພຣະຄຣິສໃນທຸກຍຸກສະໄໝໄດ້ຮັບການກວດສອບ ແລະ ຕັດສິນແລ້ວ, ເວລາແຫ່ງພຣະກະລຸນາຈຶ່ງຈະສິ້ນສຸດລົງ ແລະ ປະຕູແຫ່ງຄວາມເມດຕາຈະຖືກປິດ, ແຕ່ຈະບໍ່ໄດ້ປິດລົງຈົນກວ່າວຽກງານດັ່ງກ່າວຈະສຳເລັດ. ພຣະຄຳພີກ່າວໄວ້ສັ້ນ ໆ ວ່າ “ພວກສາວບໍຣິສຸດທີ່ກຽມພ້ອມຢູ່ແລ້ວ ກໍເຂົ້າໄປກັບເຈົ້າບ່າວໃນງານກິນລ້ຽງສົມຣົດ ແລະ ປະຕູກໍອັດ.” ປະໂຫຍກນີ້ ສະແດງເຖິງເວລາຫຼັງຈາກພຣະຜູ້ຊ່ວຍໃຫ້ລອດຊົງປະຕິບັດໜ້າທີ່ຄັ້ງສຸດທ້າຍ ແລະ ວຽກງານອັນຍິ່ງໃຫຍ່ແຫ່ງການຊ່ວຍມະນຸດໃຫ້ລອດພົ້ນໄດ້ສຳເລັດຢ່າງສົມບູນ. *{GC 428.2}*

ໃນການປະຕິບັດໜ້າທີ່ໃນຫໍເຕັນສັກສິດ ເຊິ່ງພວກເຮົາໄດ້ເຫັນແລ້ວວ່າ ເປັນສັນຍະລັກຂອງພາລະກິດ

ໃນສະຖານນະມັດສະການແຫ່ງສະຫວັນ, ເມື່ອມະຫາປະໂຣຫິດເຂົ້າໄປໃນສະຖານທີ່ສັກສິດທີ່ສຸດໃນວັນລຶບລ້າງບາບ ພາລະກິດໃນຫ້ອງທຳອິດກໍສິ້ນສຸດລົງ. ພຣະເຈົ້າຊົງບັນຊາວ່າ: “ເວລາທີ່ອາໂຣນເຂົ້າໄປໃນບ່ອນສັກສິດທີ່ສຸດ ເພື່ອເຮັດພິທີຊຳລະໃຫ້ໝົດມົນທິນຈົນຮອດເວລາເພິ່ນອອກມານັ້ນ ຢ່າໃຫ້ຜູ້ໃດຢູ່ໃນຫໍເຕັນບ່ອນຊຸມນຸມ.” (ລະບຽບພວກເລວີ 16:17). ເຊັ່ນດຽວກັນ, ເມື່ອພຣະຄຣິສເຂົ້າໄປໃນສະຖານທີ່ສັກສິດທີ່ສຸດ ເພື່ອປະຕິບັດວຽກງານສຸດທ້າຍຂອງການລຶບລ້າງບາບ, ພຣະອົງໄດ້ສິ້ນສຸດພາລະກິດຂອງພຣະອົງໃນຫ້ອງທຳອິດ. ແລະໃນທຳນອງດຽວກັນ, ເມື່ອພາລະກິດໃນຫ້ອງທຳອິດສິ້ນສຸດລົງ, ພາລະກິດໃນຫ້ອງທີສອງກໍເລີ່ມຕົ້ນຂຶ້ນ. ໃນຫໍເຕັນສັກສິດ ເມື່ອມະຫາປະໂຣຫິດອອກຈາກສະຖານທີ່ສັກສິດໃນວັນລຶບລ້າງບາບ ເພິ່ນໄດ້ເຂົ້າໄປຕໍ່ພຣະພັກພຣະເຈົ້າ ເພື່ອຖວາຍເລືອດຂອງເຄື່ອງບູຊາໄຖ່ບາບ ແທນຊາວອິດສະຣາເອນທຸກຄົນທີ່ກັບໃຈຈາກຄວາມບາບຂອງຕົນຢ່າງແທ້ຈິງ. ເຊັ່ນດຽວກັນ, ພຣະຄຣິສໄດ້ສຳເລັດວຽກງານສ່ວນໜຶ່ງຂອງພຣະອົງ ໃນຖານະຜູ້ອ້ອນວອນແທນພວກເຮົາ ເພື່ອເຂົ້າສູ່ພາລະກິດອີກສ່ວນໜຶ່ງ, ພຣະອົງຍັງຄົງອ້ອນວອນຕໍ່ພຣະພັກພຣະບິດາແທນຄົນບາບ ໂດຍອ້າງເຖິງພຣະໂລຫິດຂອງພຣະອົງ. *{GC 428.3}*

ໃນປີ 1844 ຊາວແອັດເວັນຕິສບໍ່ເຂົ້າໃຈເລື່ອງນີ້. ຫຼັງຈາກເວລາທີ່ຄາດຄະເນໄວ້ສຳລັບການສະເດັດມາຂອງພຣະຜູ້ຊ່ວຍໃຫ້ລອດໄດ້ຜ່ານພົ້ນໄປ, ຜູ້ທີ່ເຊື່ອຍັງຄົງໝັ້ນໃຈວ່າ ການສະເດັດມາຂອງພຣະອົງໃກ້ເຂົ້າມາ. ຊາວແອັດເວັນຕິສຖືວ່າພວກຕົນໄດ້ມາເຖິງຈຸດວິກິດອັນສຳຄັນ ແລະ ເຂົ້າໃຈວ່າວຽກງານຂອງພຣະຄຣິສໃນຖານະຜູ້ອ້ອນວອນເພື່ອມະນຸດຕໍ່ພຣະພັກພຣະເຈົ້າໄດ້ສິ້ນສຸດລົງແລ້ວ. ພວກເຂົາເຂົ້າໃຈວ່າ, ພຣະຄຳພີສອນວ່າເວລາແຫ່ງພຣະກະລຸນາສຳລັບມະນຸດ ຈະສິ້ນສຸດລົງເປັນໄລຍະເວລາສັ້ນໆ ກ່ອນທີ່ພຣະຄຣິສຈະສະເດັດມາໃນໝູ່ເມກແຫ່ງຟ້າສະຫວັນ. ພວກເຂົາເຫັນວ່າເລື່ອງນີ້ສອດຄ່ອງກັບຂໍ້ພຣະຄຳພີທີ່ກ່າວເຖິງເວລາທີ່ມະນຸດຈະສະແຫວງຫາ, ຮ້ອງໄຫ້ ແລະ ເຄาะທີ່ປະຕູແຫ່ງຄວາມເມດຕາ ແຕ່ພຣະເຈົ້າຈະບໍ່ເປີດໃຫ້. ດັ່ງນັ້ນ, ຈຶ່ງເກີດຄຳຖາມວ່າ ວັນທີທີ່ຄາດຫວັງໄວ້ສຳລັບການສະເດັດມາຂອງພຣະຄຣິສນັ້ນ ອາດຈະເປັນຈຸດເລີ່ມຕົ້ນຂອງຊ່ວງເວລານີ້ ເຊິ່ງຈະເກີດຂຶ້ນກ່ອນການສະເດັດມາຂອງພຣະອົງ. ຫຼັງຈາກທີ່ໄດ້ປະກາດຄຳເຕືອນເລື່ອງການພິພາກສາທີ່ໃກ້ເຂົ້າມາແລ້ວ, ຄົນເຫຼົ່ານີ້ຮູ້ສຶກວ່າໜ້າທີ່ຂອງຕົນຕໍ່ຊາວໂລກໄດ້ສຳເລັດແລ້ວ ຈຶ່ງສູນເສຍພາລະໃຈໃນການຊ່ວຍໃຫ້ຄົນບາບໄດ້ຮັບຄວາມລອດ. ໃນຂະນະດຽວກັນ, ການເຍາะເຍີ້ ແລະ ການໝິ່ນປะໝาດຢ่างໜ้าດ้ານຂອງຄົນອะທຳ ເบิ่งຄືจะเป็นหลักฐานเพิ่มเติมว่า พระวิญญาณของพระเจ้าได้ถอนตัวออกจากผู้ที่ปะติเสดพระกะลุนาของพระอ๋ง. ทั้งหมดนี้เธ็ดใฮ้ผู้เฮื่อหมั่นใจยิ่งขึ้นว่า เวลาแห่งพระกะลุนาได้สิ้นสุดลงแล้ว ซึ่ ตามที่เว้าห้นในเวลานั้นว่า “ปะตูแห่งพระกะลุนาได้ปิดลงแล้ว.” *{GC 429.1}*

ແຕ່ແສງສະຫວ່າງທີ່ຊັດເຈນຍິ່ງຂຶ້ນ ໄດ້ມາພ້ອມກັບການຄົ້ນຄວ້າເລື່ອງສະຖານນະມັດສະການ. ບັດນີ້ຊາວແອັດເວັນຕິສເຫັນແລ້ວວ່າ ຄວາມເຊື່ອຂອງພວກເຂົາຖືກຕ້ອງທີ່ວ່າ ການສິ້ນສຸດຂອງໄລຍະເວລາ 2,300 ວັນໃນປີ 1844 ເປັນຈຸດປ່ຽນແປງທີ່ສຳຄັນ. ເຖິງແມ່ນວ່າເປັນຄວາມຈິງທີ່ປะตูแห่งความหวัง และ พระกะลุนาที่มะนุดได้เข้าหาพระเจ้ามาเป็นเวลา 1,800 กว่าปีได้ปิดลงแล้ว แต่ปะตูอีกบานหนึ่งได้เปิดออก. ພຣะຄຣິສປะทานการอะไพบาบแก่มะนุด โดยการอ้อมวอนในสะถานที่สักสิดที่สุด. ການຮັບໃຊ້ສ่วนหนึ่งของพระอ๋งได้สิ้นสุดลง เพื่อเปิดทางใฮ้แก่การรับใช้อีกอย่างหนึ่ง. ยังมี “ปะตูที่เปิดอยู่” เข้าสู่สะถานนะมัดสะการในสะหวัน บ่อนที่พระคริสกำลังปะติบัดหน้าที่เพื่อคนบาบ. *{GC 429.2}*

ບັດນີ້, ພວກເຂົາຈຶ່ງເຂົ້າໃຈຄວາມໝາຍຂອງພຣະຄຣິສໃນພຣະນິມິດທີ່ກ່າວເຖິງຄຣິສຕະຈັກໃນຍຸກນັ້ນວ່າ: “ຖ້ອຍຄຳເຫຼົ່ານີ້ເປັນຂອງພຣະອົງຜູ້ບໍຣິສຸດ ແລະ ເປັນຄວາມຈິງ, ຜູ້ຖືກະແຈຂອງດາວິດ. ສິ່ງທີ່ພຣະອົງເປີດແລ້ວ ບໍ່ມີຜູ້ໃດສາມາດປິດໄດ້ ແລະ ສິ່ງທີ່ພຣະອົງປິດແລ້ວ ບໍ່ມີຜູ້ໃດສາມາດເປີດໄດ້. ເຮົາຮູ້ຈັກການກະທຳຂອງເຈົ້າ, ເບິ່ງແມ ເຮົາໄດ້ເປີດປະຕູໄວ້ຢູ່ຕໍ່ໜ້າເຈົ້າ ເຊິ່ງບໍ່ມີຜູ້ໃດສາມາດປິດໄດ້.” (ພຣະນິມິດ 3:7–8 LCV). *{GC 430.1}*

ຜູ້ທີ່ຕິດຕາມພຣະເຢຊູດ້ວຍຄວາມເຊື່ອໃນພາລະກິດອັນຍິ່ງໃຫຍ່ແຫ່ງການລຶບລ້າງຄວາມບາບ ຈະໄດ້ຮັບພຣະພອນຈາກການປະຕິບັດໜ້າທີ່ຄົນກາງຂອງພຣະອົງ. ສ່ວນຜູ້ທີ່ປະຕິເສດແສງສະຫວ່າງທີ່ເປີດເຜີຍພາລະກິດນັ້ນ ກໍຈະບໍ່ໄດ້ຮັບປະໂຫຍດໃດໆ ຈາກພາລະກິດດັ່ງກ່າວ. ມີຊາວຢິວທີ່ໄດ້ປະຕິເສດແສງສະຫວ່າງທີ່ປະທານໃຫ້ກ່ຽວກັບການສະເດັດມາຄັ້ງທຳອິດຂອງພຣະຄຣິສ ແລະ ບໍ່ຍອມເຊື່ອວ່າພຣະອົງເປັນພຣະຜູ້ຊ່ວຍໃຫ້ລອດຂອງໂລກ, ພວກເຂົາຈຶ່ງບໍ່ສາມາດໄດ້ຮັບການອະໄພບາບຜ່ານພຣະອົງ. ເມື່ອພຣະເຢຊູສະເດັດຂຶ້ນສະຫວັນ ແລະ ເຂົ້າໄປໃນສະຖານນະມັດສະການໃນສະຫວັນ ເພື່ອອວຍພອນພວກສາວົກຂອງພຣະອົງໃນຖານະຄົນກາງ ໂດຍອາໄສຄຸນຄ່າແຫ່ງການເສຍສະຫຼະພຣະໂລຫິດຂອງພຣະອົງເອງ, ພວກຊາວຢິວກໍຖືກປະໄວ້ໃນຄວາມມືດມົນ ໃຫ້ສືບຕໍ່ການຖວາຍບູຊາທີ່ບໍ່ມີປະໂຫຍດ. ຕອນນັ້ນປະໂຫຍດຂອງພິທີການ ອັນເປັນພຽງແຕ່ເງົາສັນຍະລັກເຫຼົ່ານັ້ນ ໄດ້ສິ້ນສຸດລົງ ແລະ ປະຕູທີ່ມະນຸດເຄີຍໃຊ້ໃນການເຂົ້າເຝົ້າພຣະເຈົ້າໄດ້ປິດລົງແລ້ວ. ມີທາງດຽວທີ່ສາມາດພົບພຣະອົງໄດ້ ຄືຜ່ານການປະຕິບັດໜ້າທີ່ໃນສະຖານນະມັດສະການແຫ່ງສະຫວັນ ແຕ່ຊາວຢິວໄດ້ປະຕິເສດເລື່ອງນີ້. ດ້ວຍເຫດນີ້, ພວກເຂົາຈຶ່ງບໍ່ມີການຕິດຕໍ່ພົວພັນກັບພຣະເຈົ້າ. ສຳລັບພວກເຂົາ ປະຕູໄດ້ປິດແລ້ວ, ພວກເຂົາບໍ່ຮູ້ຈັກພຣະຄຣິສໃນຖານະເຄື່ອງບູຊາທີ່ແທ້ຈິງ ແລະ ຄົນກາງພຽງຜູ້ດຽວຕໍ່ພຣະພັກພຣະເຈົ້າ. ສະນັ້ນ, ພວກເຂົາຈຶ່ງບໍ່ສາມາດຮັບພຣະພອນຈາກການເປັນຄົນກາງຂອງພຣະອົງໄດ້. *{GC 430.2}*

ສະພາບຂອງຊາວຢິວທີ່ບໍ່ເຊື່ອນັ້ນ ສະທ້ອນໃຫ້ເຫັນເຖິງທ່າທີຂອງຄຣິສຕຽນທີ່ບໍ່ເຊື່ອ ແລະ ບໍ່ເອົາໃຈໃສ່, ຄືຜູ້ທີ່ຕັ້ງໃຈບໍ່ຮັບຮູ້ເລື່ອງການປະຕິບັດໜ້າທີ່ດ້ວຍຄວາມເມດຕາຂອງມະຫາປະໂຣຫິດຂອງພວກເຮົາ. ໃນພິທີກຳທີ່ເປັນຮູບແບບສັນຍະລັກນັ້ນ, ເມື່ອມະຫາປະໂຣຫິດເຂົ້າໄປໃນສະຖານທີ່ສັກສິດທີ່ສຸດ ຊາວອິດສະຣາເອນທັງໝົດຕ້ອງເຕົ້າໂຮມກັນອ້ອມຮອບຫໍເຕັນສັກສິດ ແລະ ຖ່ອມຕົວລົງຕໍ່ພຣະພັກພຣະເຈົ້າຢ່າງສຸດຈິດສຸດໃຈ ເພື່ອພວກເຂົາຈະໄດ້ຮັບການອະໄພບາບ ແລະ ຈະບໍ່ຖືກຕັດອອກຈາກຊຸມຊົນ. ໃນ “ວັນລຶບລ້າງຄວາມບາບ” ທີ່ເປັນການສຳເລັດຂອງພຣະຄຳພີເດີມ ມັນຈຶ່ງສຳຄັນຫຼາຍກວ່ານັ້ນອີກ ທີ່ພວກເຮົາຈະຕ້ອງເຂົ້າໃຈພາລະກິດຂອງມະຫາປະໂຣຫິດຂອງພວກເຮົາ ແລະ ຮູ້ວ່າພວກເຮົາມີໜ້າທີ່ອັນໃດແດ່. *{GC 430.3}*

ບົດຮຽນສຳລັບພວກເຮົາ

ມະນຸດບໍ່ສາມາດປະຕິເສດຄຳເຕືອນທີ່ພຣະເຈົ້າປະທານໃຫ້ດ້ວຍຄວາມເມດຕາ ໂດຍທີ່ພວກເຂົາບໍ່ໄດ້ຮັບຜົນກະທົບອັນຮ້າຍແຮງ. ໃນສະໄໝຂອງໂນອາ, ພຣະເຈົ້າໄດ້ສົ່ງຂ່າວມາຈາກສະຫວັນເພື່ອເຕືອນຊາວໂລກ ແລະ ຄວາມລອດຂອງຜູ້ຄົນຂຶ້ນຢູ່ກັບທ່າທີຂອງພວກເຂົາຕໍ່ຄຳຕັກເຕືອນນັ້ນ. ເນື່ອງຈາກຄົນໃນສະໄໝນັ້ນໄດ້ປະຕິເສດຄຳເຕືອນ, ພຣະເຈົ້າຈຶ່ງຊົ່ງຖອນພຣະວິນຍານຂອງພຣະອົງອອກຈາກມະນຸດສະໂລກຜູ້ເຕັມໄປດ້ວຍບາບກຳ; ພວກເຂົາຈຶ່ງຕາຍໃນນ້ຳຖ້ວມໂລກ. ໃນສະໄໝຂອງອັບຣາຮາມ, ພຣະເຈົ້າຊົ່ງຢຸດການອ້ອນວອນດ້ວຍຄວາມເມດຕາຕໍ່ຊາວເມືອງໂຊໂດມຜູ້ຜິດບາບ; ແລະທຸກຄົນໄດ້ຖືກໄຟຈາກສະຫວັນເຜົາຜານໃຫ້ພິນາດ ຍົກເວັ້ນໂລດ, ເມຍຂອງລາວ ແລະ ລູກສາວສອງຄົນເທົ່ານັ້ນ. ໃນ

ສະໄໝຂອງພຣະຄຣິສກໍເຊັ່ນດຽວກັນ; ພຣະບຸດຂອງພຣະເຈົ້າໄດ້ປະກາດແກ່ຊາວຢິວທີ່ບໍ່ເຊື່ອໃນຍຸກນັ້ນວ່າ: “ເຮືອນຂອງພວກເຈົ້າຖືກປະຖິ້ມໃຫ້ຮ້າງເປົ່າ.” (ມັດທາຍ 23:38 LCV). ພຣະເຈົ້າຜູ້ຊົງຣິດທານຸພາບອັນບໍ່ມີຂອບເຂດ ໄດ້ປະກາດລ່ວງໜ້າເຖິງຄົນໃນຍຸກສຸດທ້າຍວ່າ: “ພວກເຂົາປະຕິເສດທີ່ຈະຮັກຄວາມຈິງທີ່ນຳໄປສູ່ຄວາມພົ້ນ.” “ດ້ວຍເຫດນີ້ແຫຼະ, ພຣະເຈົ້າຈຶ່ງຊົງໃຫ້ອິດທິພົນຫຼອກລໍ້ນັ້ນເຮັດການຢູ່ພາຍໃນ ເພື່ອໃຫ້ເຂົາເຊື່ອຟັງຄວາມບໍ່ຈິງ, ເພື່ອພວກຄົນທີ່ບໍ່ເຊື່ອຄວາມຈິງ ແຕ່ຍິນດີໃນການຊົ່ວຮ້າຍ ຈະໄດ້ຖືກພິພາກສາລົງໂທດໝົດທຸກຄົນ.” (2 ເທສະໂລນິກ 2:10–12 LO1972). ເມື່ອຄົນເຫຼົ່ານັ້ນປະຕິເສດຄຳສອນໃນພຣະຄຳຂອງພຣະອົງ, ພຣະເຈົ້າຈຶ່ງຖອນພຣະວິນຍານຂອງພຣະອົງອອກໄປ ແລະ ປ່ອຍປະໃຫ້ພວກເຂົາຫຼົງຕາມການຫຼອກລວງທີ່ພວກເຂົາເພິ່ງພໍໃຈ. *{GC 431.1}*

ຢ່າງໃດກໍຕາມ, ພຣະຄຣິສຍັງຄົງອ້ອນວອນເພື່ອມະນຸດ; ຜູ້ທີ່ສະແຫວງຫາກໍຈະໄດ້ຮັບຄວາມສະຫວ່າງ. ເຖິງແມ່ນວ່າຊາວແອັດເວັນຕິສບໍ່ໄດ້ເຂົ້າໃຈເລື່ອງນີ້ໃນເບື້ອງຕົ້ນ ແຕ່ຕໍ່ມາຄວາມຈິງໄດ້ຖືກເປີດເຜີຍຢ່າງຈະແຈ້ງ ໂດຍພວກເຂົາເລີ່ມເຂົ້າໃຈພຣະຄຳພີທີ່ອະທິບາຍເຖິງສະຖານະທີ່ແທ້ຈິງຂອງພວກເຂົາ. *{GC 431.2}*

ສະຫຼຸບວ່າ: ຫຼັງຈາກເວລາທີ່ຄາດຫວັງໄວ້ໃນປີ 1844 ຜ່ານພົ້ນໄປ, ຜູ້ທີ່ຍັງຢຶດໝັ້ນໃນຄວາມເຊື່ອເລື່ອງການສະເດັດມາ ກໍເຂົ້າສູ່ໄລຍະເວລາແຫ່ງການທົດສອບອັນຍິ່ງໃຫຍ່. ມີສິ່ງດຽວທີ່ຊ່ວຍໃນການຄົ້ນພົບສະຖານະທີ່ແທ້ຈິງຂອງພວກເຂົາ ນັ້ນຄືຄວາມສະຫວ່າງເລື່ອງສະຖານນະມັດສະການໃນສະຫວັນ. ບາງຄົນໄດ້ປະຖິ້ມຄວາມເຊື່ອໃນການຄຳນວນໄລຍະເວລາຕາມຄຳພະຍາກອນທີ່ເຄີຍເຊື່ອຖື, ແລະອະທິບາຍວ່າ ຣິດອຳນາດອັນຍິ່ງໃຫຍ່ຂອງພຣະວິນຍານບໍຣິສຸດ ທີ່ຊົງນຳພາຂະບວນການປະກາດເລື່ອງການສະເດັດມານັ້ນ ແມ່ນມາຈາກມະນຸດ ຫຼື ຊາຕານ. ອີກກຸ່ມໜຶ່ງ, ຍັງຄົງເຊື່ອໝັ້ນວ່າ ອົງພຣະຜູ້ເປັນເຈົ້າໄດ້ນຳພາໃນປະສົບການທີ່ຜ່ານມາ. ໃນຂະນະທີ່ລໍຄອຍ, ເຝົ້າຕິດຕາມ ແລະ ອະທິຖານເພື່ອຊອກຮູ້ນ້ຳພຣະໄທຂອງພຣະເຈົ້າ, ຄົນກຸ່ມນີ້ໄດ້ເຫັນວ່າ ມະຫາປະໂຣຫິດຜູ້ຍິ່ງໃຫຍ່ໄດ້ເລີ່ມຕົ້ນພາລະກິດອັນອີກ. ເມື່ອຕິດຕາມພຣະອົງດ້ວຍຄວາມເຊື່ອ, ຜູ້ທີ່ສັດຊື່ເຫຼົ່ານີ້ ຈຶ່ງເຂົ້າໃຈພາລະກິດສຸດທ້າຍຂອງຄຣິສຕະຈັກ ແລະ ເຂົ້າໃຈຂ່າວສານຂອງທູດສະຫວັນອົງທີໜຶ່ງ ແລະ ອົງທີສອງຢ່າງຈະແຈ້ງຂຶ້ນ; ດັ່ງນັ້ນ, ຈຶ່ງພ້ອມທີ່ຈະຮັບເອົາ ແລະ ປະກາດຄຳເຕືອນອັນເຄັ່ງຂຶມຂອງທູດສະຫວັນອົງທີສາມໃນພຣະນິມິດບົດທີ 14 ໃຫ້ແກ່ຊາວໂລກ. *{GC 431.3}*

25

ພຣະບັນຍັດຂອງພຣະເຈົ້າປ່ຽນແປງບໍ່ໄດ້

ການເປີດເຜີຍພຣະບັນຍັດໃນສະຫວັນ

“ແລ້ວວິຫານຂອງພຣະເຈົ້າໃນສະຫວັນກໍເປີດອອກ ແລະ ຂ້າພະເຈົ້າໄດ້ເຫັນຫີບພັນທະສັນຍາ ພາຍໃນວິຫານຂອງພຣະອົງ.” (ພຣະນິມິດ 11:19 LCV). ຫີບພັນທະສັນຍາຂອງພຣະເຈົ້າຢູ່ໃນ ສະຖານທີ່ສັກສິດທີ່ສຸດ ເຊິ່ງເປັນຫ້ອງທີສອງຂອງສະຖານນະມັດສະການ. ໃນການປະຕິບັດໜ້າທີ່ຂອງ ຫໍເຕັນສັກສິດໃນໂລກ “ອັນເປັນແບບຈຳລອງ ແລະ ເປັນເງົາຂອງສິ່ງທີ່ຢູ່ໃນສະຫວັນ,”[1] ຫ້ອງນີ້ຈະເປີດ ອອກສະເພາະໃນວັນລຶບລ້າງບາບອັນຍິ່ງໃຫຍ່ເທົ່ານັ້ນ ເພື່ອຊຳລະສະຖານນະມັດສະການ. ດັ່ງນັ້ນ, ການ ປະກາດວ່າ ພຣະວິຫານຂອງພຣະເຈົ້າໄດ້ເປີດອອກໃນສະຫວັນ ແລະ ຄົນທັງຫຼາຍໄດ້ເຫັນຫີບພັນທະ-ສັນຍາຂອງພຣະອົງ ຈຶ່ງຊີ້ໃຫ້ເຫັນເຖິງການເປີດສະຖານທີ່ສັກສິດທີ່ສຸດຂອງສະຖານນະມັດສະການໃນ ສະຫວັນໃນປີ 1844; ໃນເວລານັ້ນ, ພຣະຄຣິສໄດ້ສະເດັດເຂົ້າໄປ ເພື່ອປະຕິບັດພາລະກິດສຸດທ້າຍ ແຫ່ງການລຶບລ້າງບາບ. ພຣະເຢຊູຊົງເປັນມະຫາປະໂຣຫິດຜູ້ຍິ່ງໃຫຍ່; ຜູ້ທີ່ຕິດຕາມພຣະອົງເຂົ້າໄປ ໃນສະຖານທີ່ສັກສິດທີ່ສຸດດ້ວຍຄວາມເຊື່ອ ກໍໄດ້ເຫັນຫີບພັນທະສັນຍາຂອງພຣະອົງ. ຈາກການ ສຶກສາເລື່ອງສະຖານນະມັດສະການ ພວກເຂົາໄດ້ເຂົ້າໃຈວ່າ ພາລະກິດຂອງພຣະຜູ້ຊ່ວຍໃຫ້ລອດໄດ້ ປ່ຽນແປງໄປ. ພວກເຂົາເຂົ້າໃຈວ່າ, ເວລານີ້ພຣະອົງກຳລັງປະຕິບັດໜ້າທີ່ຢູ່ຕໍ່ໜ້າຫີບພັນທະສັນຍາຂອງ ພຣະເຈົ້າ ແລະ ຊົງວິງວອນເພື່ອຄົນບາບໂດຍອ້າງເຖິງພຣະໂລຫິດຂອງພຣະອົງ. *{GC 433.1}*

ຫີບພັນທະສັນຍາໃນຫໍເຕັນສັກສິດບັນຈຸແຜ່ນຫີນສອງແຜ່ນ ເຊິ່ງມີພຣະບັນຍັດຂອງພຣະເຈົ້າຈາລຶກ ໄວ້. ຫີບນີ້ເປັນພຽງພາຊະນະບັນຈຸແຜ່ນພຣະບັນຍັດເທົ່ານັ້ນ ແລະ ການທີ່ມີພຣະບັນຍັດເຫຼົ່ານີ້ຢູ່ໃນ ຫີບ ເຮັດໃຫ້ຫີບນັ້ນມີຄຸນຄ່າ ແລະ ຄວາມສັກສິດ. ເມື່ອພຣະວິຫານຂອງພຣະເຈົ້າຖືກເປີດອອກໃນ ສະຫວັນ ຫີບພັນທະສັນຍາຂອງພຣະອົງກໍໄດ້ຮັບການເປີດເຜີຍ. ພຣະບັນຍັດຂອງພຣະເຈົ້າຖືກເກັບ ຮັກສາໄວ້ ດ້ວຍຄວາມບໍຣິສຸດສັກສິດພາຍໃນສະຖານທີ່ສັກສິດທີ່ສຸດ ໃນສະຖານນະມັດສະການແຫ່ງ ສະຫວັນ. ພຣະບັນຍັດນີ້ແມ່ນພຣະເຈົ້າເອງຊົງກ່າວທີ່ພູເຂົາຊີນາຍທ່າມກາງສຽງຟ້າຮ້ອງ ແລະ ພຣະອົງ ຊົງຂຽນດ້ວຍນິ້ວພຣະຫັດຂອງພຣະອົງເອງລົງແຜ່ນຫີນເຫຼົ່ານັ້ນ. *{GC 433.2}*

ພຣະບັນຍັດຂອງພຣະເຈົ້າໃນສະຖານນະມັດສະການແຫ່ງສະຫວັນເປັນຕົ້ນສະບັບເດີມອັນຍິ່ງໃຫຍ່. ພຣະບັນຍັດທີ່ຖືກຈາລຶກໄວ້ເທິງແຜ່ນຫີນ ແລະ ບັນທຶກໄວ້ໂດຍໂມເຊໃນປຶ້ມຫ້າໜ້ວທຳອິດຂອງພຣະຄຳພີ ເດີມ ເປັນການຄັດລອກທີ່ບໍ່ມີຂໍ້ຜິດພາດຈາກຕົ້ນສະບັບນັ້ນ. ຜູ້ທີ່ເຂົ້າໃຈຈຸດສຳຄັນນີ້ ຈຶ່ງໄດ້ເຫັນ ເຖິງລັກສະນະທີ່ສັກສິດ ແລະ ບໍ່ປ່ຽນແປງຂອງພຣະບັນຍັດຂອງພຣະເຈົ້າ. ພວກເຂົາໄດ້ເຂົ້າໃຈຄວາມ ໝາຍອັນເລິກເຊິ່ງໃນຖ້ອຍຄຳຂອງພຣະຜູ້ຊ່ວຍໃຫ້ລອດຢ່າງທີ່ບໍ່ເຄີຍເຂົ້າໃຈມາກ່ອນ, ທີ່ພຣະອົງຊົງກ່າວ

[1] ເຮັບເຣີ 8:5 LCV.

ວ່າ: “ຕາບໃດທີ່ສະຫວັນ ແລະ ແຜ່ນດິນໂລກຍັງຕັ້ງຢູ່ ແມ່ນແຕ່ໂຕອັກສອນທີ່ນ້ອຍທີ່ສຸດພຽງໂຕ ໜຶ່ງ ຫຼື ຈຸດດຽວກໍຈະບໍ່ສູນຫາຍໄປຈາກໜັງສືກົດບັນຍັດ.” (ມັດທາຍ 5:18 LCV). ພຣະບັນຍັດ ຂອງພຣະເຈົ້າ ເປັນການເປີດເຜີຍພຣະປະສົງຂອງພຣະອົງ ແລະ ສະທ້ອນເຖິງພຣະລັກສະນະຂອງ ພຣະອົງ. ສະນັ້ນ, ມັນຈຶ່ງຕ້ອງຕັ້ງໝັ້ນຢູ່ຕະຫຼອດໄປ “ເປັນພະຍານອັນສັດຊື່ໃນຟ້າສະຫວັນ.” ບໍ່ມີ ພຣະບັນຍັດຂໍ້ໃດຖືກຍົກເລີກ ຫຼື ປ່ຽນແປງແມ່ນແຕ່ຈຸດ ຫຼື ຂີດດຽວ. ຜູ້ຂຽນພຣະທຳເພງສັນລະເສີນ ກ່າວວ່າ: “ຂ້າແດ່ອົງພຣະຜູ້ເປັນເຈົ້າ ຖ້ອຍຄຳຂອງພຣະອົງນັ້ນດຳລົງຢູ່ສືບໄປ ເປັນພຣະຄຳອັນຊົ່ວ ນິຣັນໃນຟ້າສະຫວັນ.” “ຂໍ້ຄຳສັ່ງທຸກຂໍ້ກໍເປັນທີ່ໄວ້ວາງໃຈໄດ້ ເຊິ່ງດຳລົງຢູ່ໄດ້ຕະຫຼອດທຸກຍຸກທຸກ ສະໄໝ.” (ເພງສັນລະເສີນ 89:37 ແປຈາກສະບັບ KJV; 119:89 LO2012; 111:7, 8). *{GC 434.1}*

ໃຈກາງຂອງພຣະບັນຍັດສິບປະການ ແມ່ນພຣະບັນຍັດຂໍ້ທີສີ່ ເຊິ່ງຍັງຄົງເໝືອນເດີມຕັ້ງແຕ່ການ ປະກາດຄັ້ງທຳອິດ ແລະ ມີໃຈຄວາມວ່າ: “ຈົ່ງຖືວັນສະບາໂຕ ແລະ ຢຶດຖືໄວ້ເປັນວັນສັກສິດ. ເຈົ້າ ມີໜ້າວັນທີ່ຈະເຮັດວຽກຂອງເຈົ້າ ແຕ່ໃນວັນທີເຈັດ ເປັນວັນສະບາໂຕຂອງພຣະເຈົ້າຢາເວ ພຣະເຈົ້າ ຂອງເຈົ້າ. ໃນວັນນີ້ ເຈົ້າເອງພ້ອມດ້ວຍລູກຊາຍຍິງກັບຄົນຮັບໃຊ້ ແລະ ສັດລ້ຽງຂອງເຈົ້າ ຕະຫຼອດ ທັງຄົນຕ່າງດ້າວທີ່ອາໄສຢູ່ໃນບ້ານເມືອງຂອງເຈົ້າ ບໍ່ຕ້ອງເຮັດວຽກໃດໆທັງສິ້ນ. ໃນໜ້າວັນ ພຣະເຈົ້າ ຢາເວໄດ້ນິຣະມິດສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ, ທະເລ ແລະ ສັບພະທຸກສິ່ງທີ່ຢູ່ໃນນັ້ນ, ແຕ່ ໃນວັນທີເຈັດໄດ້ພັກຜ່ອນ. ສະນັ້ນ, ພຣະເຈົ້າຢາເວຈຶ່ງອວຍພອນວັນສະບາໂຕ ແລະ ຕັ້ງໄວ້ເປັນວັນ ສັກສິດ.” (ອົບພະຍົບ 20:8–11). *{GC 434.2}*

ພຣະວິນຍານຂອງພຣະເຈົ້າໄດ້ດົນໃຈຄົນເຫຼົ່ານັ້ນທີ່ສຶກສາຄົ້ນຄວ້າພຣະຄຳຂອງພຣະອົງ. ພວກເຂົາ ຮູ້ສຶກວ່າຕົນເອງໄດ້ລະເມີດພຣະບັນຍັດຂໍ້ນີ້ໂດຍບໍ່ຮູ້ຕົວຍ້ອນບໍ່ໄດ້ຖືຮັກສາວັນພັກຜ່ອນເຊິ່ງພຣະຜູ້ສ້າງ ຊົງກຳນົດຂຶ້ນ. ພວກເຂົາຈຶ່ງເລີ່ມສຶກສາເຫດຜົນທີ່ຄົນນິຍົມຖືວັນອາທິດແທນທີ່ຈະຖືວັນທີ່ພຣະເຈົ້າ ໄດ້ຊົງຕັ້ງໄວ້. ພວກເຂົາບໍ່ພົບຫຼັກຖານໃດໆໃນພຣະຄຳພີທີ່ບອກວ່າ ພຣະບັນຍັດຂໍ້ທີສີ່ຖືກຍົກເລີກ ຫຼື ວັນສະບາໂຕຖືກປ່ຽນແປງ. ພຣະພອນທີ່ພຣະເຈົ້າປະທານໃຫ້ແກ່ວັນທີເຈັດແຕ່ເລີ່ມຕົ້ນນັ້ນ ກໍ ບໍ່ເຄີຍຖືກຖອນຄືນ. ພວກເຂົາພະຍາຍາມຢ່າງຈິງໃຈທີ່ຈະຮູ້ຈັກ ແລະ ເຮັດຕາມນ້ຳພຣະໄທຂອງ ພຣະເຈົ້າ. ບັດນີ້, ເມື່ອຮູ້ວ່າຕົນເອງໄດ້ລະເມີດພຣະບັນຍັດຂອງພຣະອົງ, ພວກເຂົາກໍເຕັ້ມໄປດ້ວຍຄວາມ ເສົ້າສະຫຼົດໃຈ ຈຶ່ງສະແດງຄວາມຈົງຮັກພັກດີຕໍ່ພຣະເຈົ້າ ໂດຍການຖືຮັກສາວັນສະບາໂຕຂອງພຣະອົງ ໃຫ້ບໍຣິສຸດສັກສິດ. *{GC 434.3}*

ມີຄວາມພະຍາຍາມຢ່າງຫຼວງຫຼາຍ ແລະ ຈິງຈັງທີ່ຈະລົ້ມລ້າງຄວາມເຊື່ອຂອງພວກເຂົາ. ທຸກຄົນ ສາມາດເຫັນໄດ້ຢ່າງຈະແຈ້ງວ່າ ຖ້າສະຖານນະມັດສະການໃນໂລກເປັນເງົາສັນຍະລັກ ແລະ ແບບ ຈຳລອງຂອງສະຖານນະມັດສະການໃນສະຫວັນ, ພຣະບັນຍັດທີ່ເກັບຮັກສາໄວ້ໃນຫີບພັນທະສັນຍາ ໃນໂລກ ກໍເປັນສຳເນົາອັນຖືກຕ້ອງຂອງພຣະບັນຍັດໃນຫີບພັນທະສັນຍາແຫ່ງສະຫວັນ. ຖ້າຍອມຮັບ ຄວາມຈິງກ່ຽວກັບສະຖານນະມັດສະການໃນສະຫວັນ ກໍຕ້ອງຍອມຮັບຂໍ້ກຳນົດຂອງພຣະບັນຍັດຂອງ ພຣະເຈົ້າ ແລະ ໜ້າທີ່ໃນການຖືຮັກສາວັນສະບາໂຕຕາມພຣະບັນຍັດຂໍ້ທີສີ່. ນີ້ແຫຼະຄືເຫດຜົນທີ່ ມີການຕໍ່ຕ້ານຢ່າງແຮງກ້າຕໍ່ການອະທິບາຍພຣະຄຳພີທີ່ກົມກຽວກັນ ເຊິ່ງເປີດເຜີຍການປະຕິບັດໜ້າທີ່ ຂອງພຣະຄຣິສໃນສະຖານນະມັດສະການແຫ່ງສະຫວັນ. ມີຜູ້ຄົນພະຍາຍາມປິດປະຕູທີ່ພຣະເຈົ້າໄດ້ເປີດ ອອກ ແລະ ເປີດປະຕູທີ່ພຣະອົງຊົງປິດໄວ້. ແຕ່ພຣະອົງ “ຜູ້ຊົງເປີດແລ້ວຈະບໍ່ມີຜູ້ໃດປິດ ແລະ ຜູ້ຊົງ ປິດແລ້ວຈະບໍ່ມີຜູ້ໃດເປີດ ຊົງກ່າວດັ່ງນີ້ວ່າ . . . ເບິ່ງແມ! ເຮົາໄດ້ໃຫ້ປະຕູໄຂໄວ້ຢູ່ຕໍ່ໜ້າເຈົ້າ ເຊິ່ງບໍ່ມີຜູ້ໃດ ອັດໄດ້.” (ພຣະນິມິດ 3:7, 8 LCV). ພຣະຄຣິສໄດ້ເປີດປະຕູເຂົ້າສູ່ສະຖານທີ່ສັກສິດທີ່ສຸດ ເຊິ່ງໝາຍ

ເຖິງການເລີ່ມວຽກງານຂອງພຣະອົງໃນສະຖານທີ່ດັ່ງກ່າວ. ແສງສະຫວ່າງໄດ້ສ່ອງມາຈາກປະຕູທີ່ເປີດຢູ່ໃນສະຖານນະມັດສະການແຫ່ງສະຫວັນ, ເຊິ່ງສະແດງໃຫ້ເຫັນວ່າ ພຣະບັນຍັດຂໍ້ທີສີ່ເປັນສ່ວນໜຶ່ງຂອງພຣະບັນຍັດທີ່ເກັບຮັກສາໄວ້ທີ່ນັ້ນ. ສິ່ງທີ່ພຣະເຈົ້າໄດ້ສະຖາປະນາໄວ້ແລ້ວ ບໍ່ມີຜູ້ໃດສາມາດລົ້ມລ້າງໄດ້. *{GC 435.1}*

ຜູ້ທີ່ຍອມຮັບຄວາມຈິງເລື່ອງທີ່ພຣະຄຣິສຊົງເປັນຜູ້ໄກ່ເກ່ຍ ແລະ ພຣະບັນຍັດຂອງພຣະເຈົ້າເປັນສິ່ງທີ່ຄົງຢູ່ຕະຫຼອດການນັ້ນໄດ້ພົບວ່າ ສິ່ງເຫຼົ່ານີ້ເປັນຄວາມຈິງທີ່ຖືກເປີດເຜີຍໄວ້ໃນພຣະນິມິດບົດທີ 14. ຂ່າວສານໃນບົດນີ້ປະກອບດ້ວຍຄຳເຕືອນສາມຢ່າງ ເພື່ອກຽມຊາວໂລກໃຫ້ພ້ອມສຳລັບການສະເດັດມາຄັ້ງທີສອງຂອງອົງພຣະຜູ້ເປັນເຈົ້າ. ການປະກາດວ່າ “ເວລາແຫ່ງການພິພາກສາຂອງພຣະອົງໄດ້ມາເຖິງແລ້ວ” ຊີ້ໃຫ້ເຫັນເຖິງວຽກງານສຸດທ້າຍແຫ່ງການປະຕິບັດໜ້າທີ່ຂອງພຣະຄຣິສເພື່ອຄວາມລອດຂອງມະນຸດ. ຂ່າວນີ້ເປັນຄວາມຈິງທີ່ຈະຕ້ອງປ່າວປະກາດ ຈົນກວ່າການອ້ອນວອນເພື່ອມະນຸດຂອງພຣະຜູ້ຊ່ວຍໃຫ້ລອດຈະສິ້ນສຸດລົງ ແລະ ພຣະອົງສະເດັດກັບມາຍັງໂລກ ເພື່ອຮັບໄພ່ພົນຂອງພຣະອົງໃຫ້ໄປຢູ່ກັບພຣະອົງ. ວຽກງານການພິພາກສາທີ່ໄດ້ເລີ່ມຕົ້ນໃນປີ 1844 ຈະດຳເນີນຕໍ່ໄປ ຈົນກວ່າຄະດີຂອງທຸກຄົນໄດ້ຮັບການຕັດສິນ, ທັງຄົນທີ່ມີຊີວິດ ແລະ ຄົນທີ່ຕາຍແລ້ວ. ດັ່ງນັ້ນ, ການພິພາກສານີ້ຈະດຳເນີນໄປຈົນໝົດໄລຍະເວລາແຫ່ງພຣະກະລຸນາທີ່ກຳນົດໄວ້ເພື່ອພິສູດຈິດໃຈຂອງມະນຸດ. ເພື່ອໃຫ້ມະນຸດພ້ອມທີ່ຈະຢືນຢູ່ໃນການພິພາກສາໄດ້, ຂ່າວສານນັ້ນໄດ້ສັ່ງມະນຸດທຸກຄົນວ່າ: “ຈົ່ງຢຳເກງພຣະເຈົ້າ ແລະ ຖວາຍກຽດຕິຍົດແກ່ພຣະອົງ” ແລະ “ຈົ່ງນະມັດສະການພຣະອົງຜູ້ໄດ້ສ້າງຟ້າສະຫວັນ, ແຜ່ນດິນໂລກ, ທະເລ ແລະ ບໍ່ນ້ຳພຸທັງຫຼາຍ.” (ພຣະນິມິດ 14:7 LCV). ຜົນຂອງການຍອມຮັບຂ່າວສານເຫຼົ່ານີ້ມີຢູ່ໃນຂໍ້ພຣະຄຳພີທີ່ວ່າ: “ນີ້ຄືຄວາມມານະອົດທົນຂອງບັນດາຜູ້ບໍຣິສຸດຂອງພຣະເຈົ້າ ທີ່ປະຕິບັດຕາມພຣະບັນຍັດຂອງພຣະເຈົ້າ ແລະ ມີຄວາມພັກດີຕໍ່ພຣະເຢຊູ.” (ພຣະນິມິດ 14:12 NTV). ເພື່ອກຽມຕົວສຳລັບການພິພາກສາ, ມະນຸດຈຳເປັນຕ້ອງຖືຮັກສາພຣະບັນຍັດຂອງພຣະເຈົ້າ. ໃນການພິພາກສານັ້ນ ມາດຕະຖານທີ່ໃຊ້ໃນການວັດແທກອຸປະນິໄສ ແມ່ນພຣະບັນຍັດຂອງພຣະເຈົ້າ. ອັກຄະສາວົກໂປໂລກ່າວວ່າ: “ທຸກຄົນທີ່ຢູ່ພາຍໃຕ້ກົດບັນຍັດ ແລະ ໄດ້ເຮັດບາບ ຈະຖືກຕັດສິນຕາມກົດບັນຍັດນັ້ນ; . . . ສິ່ງນີ້ຈະເກີດຂຶ້ນໃນວັນທີ່ພຣະເຈົ້າຈະໃຫ້ພຣະເຢຊູຄຣິສເຈົ້າພິພາກສາຄວາມລັບຂອງມະນຸດ.” ເພີ່ນຍັງກ່າວວ່າ: “ຜູ້ທີ່ໄດ້ເຮັດຕາມກົດບັນຍັດເທົ່ານັ້ນ ທີ່ພຣະເຈົ້າຈະປະກາດວ່າເປັນຜູ້ຊອບທຳ.” (ໂຣມ 2:12–16 LCV). ຄວາມເຊື່ອເປັນສິ່ງທີ່ຂາດບໍ່ໄດ້ໃນການຖືຮັກສາພຣະບັນຍັດຂອງພຣະເຈົ້າ ເພາະວ່າ, “ຖ້າບໍ່ມີຄວາມເຊື່ອ ກໍເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ພຣະເຈົ້າພໍໃຈ” ແລະ “ສິ່ງໃດທີ່ເຮັດໄປໂດຍບໍ່ເກີດຈາກຄວາມເຊື່ອກໍເປັນບາບ.” (ເຮັບເຣີ 11:6 LCV; ໂຣມ 14:23 LCV). *{GC 435.2}*

ທູດສະຫວັນອົງທີໜຶ່ງໄດ້ຮຽກຮ້ອງໃຫ້ມະນຸດ “ຢຳເກງພຣະເຈົ້າ ແລະ ຖວາຍກຽດຕິຍົດແກ່ພຣະອົງ” ແລະ ນະມັດສະການພຣະອົງໃນຖານະຜູ້ຊົງສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ. ເພື່ອເຮັດສິ່ງເຫຼົ່ານີ້ໄດ້ ພວກເຂົາຕ້ອງປະຕິບັດຕາມພຣະບັນຍັດຂອງພຣະອົງ. ກະສັດໂຊໂລໂມນກ່າວໄວ້ວ່າ: “ຈົ່ງຢຳເກງພຣະເຈົ້າ ແລະ ຮັກສາພຣະບັນຍັດຂອງພຣະອົງ ເພາະນີ້ເປັນໜ້າທີ່ທັງໝົດຂອງມະນຸດ.” (ປັນຍາຈານ 12:13 TNCV). ການນະມັດສະການທີ່ປາສະຈາກການປະຕິບັດຕາມພຣະບັນຍັດຂອງພຣະອົງນັ້ນ ບໍ່ເປັນທີ່ພໍພຣະໄທພຣະເຈົ້າ. “ນີ້ເປັນຄວາມຮັກຕໍ່ພຣະເຈົ້າຄື: ການຖືຮັກສາຄຳສັ່ງຂອງພຣະອົງ.” “ຜູ້ໃດທີ່ບໍ່ປະຕິບັດຕາມກົດບັນຍັດ ພຣະເຈົ້າກໍຈະກຽດຊັງຄຳພາວັນນາອະທິຖານຂອງຜູ້ນັ້ນ.” (1 ໂຢຮັນ 5:3 LCV; ສຸພາສິດ 28:9). *{GC 436.1}*

ຈົ່ງນະມັດສະການພຣະຜູ້ສ້າງ

ໜ້າທີ່ໃນການນະມັດສະການພຣະເຈົ້າ ແມ່ນອີງໃສ່ຂໍ້ເທັດຈິງທີ່ວ່າພຣະອົງຊົງເປັນພຣະຜູ້ສ້າງ ແລະ ສິ່ງທີ່ມີຊີວິດທັງປວງມີຢູ່ໄດ້ກໍຍ້ອນພຣະອົງ. ໃນພຣະຄຳພີ ທຸກຄັ້ງທີ່ກ່າວເຖິງການທີ່ພຣະອົງຊົງສົມຄວນໄດ້ຮັບຄວາມຢຳເກງ ແລະ ການນະມັດສະການເໜືອບັນດາພຣະຂອງຊົນຊາດທັງຫຼາຍທີ່ບໍ່ນັບຖືພຣະເຈົ້ານັ້ນ, ກໍຈະຊີ້ໃຫ້ເຫັນເຖິງຣິດອຳນາດແຫ່ງການຊົງສ້າງຂອງພຣະອົງ. “ພຣະຂອງຊົນຊາດອື່ນນັ້ນເປັນພຽງແຕ່ຮູບເຄົາລົບ ສ່ວນອົງພຣະຜູ້ເປັນເຈົ້າໄດ້ສ້າງຟ້າສະຫວັນ.” (ເພງສັນລະເສີນ 96:5 LO2012). “ພຣະເຈົ້າອົງບໍຣິສຸດຖືກທຽບໃສ່ໄດ້ກັບສິ່ງໃດນໍ? ມີຜູ້ໃດແດ່ທີ່ສຳຄັນເໝືອນດັ່ງພຣະອົງໄດ້? ຈົ່ງເງີຍໜ້າຂຶ້ນສູ່ທ້ອງຟ້າເວຫາເບິ່ງດູ ຜູ້ໃດສ້າງໝູ່ດວງດາວທີ່ທ່ານເຫັນຢູ່ນັ້ນ?” “ພຣະເຈົ້າຢາເວໄດ້ນິຣະມິດສ້າງຈັກກະວານ ແມ່ນພຣະອົງແຕ່ຜູ້ດຽວທີ່ເປັນພຣະເຈົ້າ; ພຣະອົງໄດ້ຈັດຮູບຮ່າງສ້າງແຜ່ນດິນໂລກຂຶ້ນມາ . . . ພຣະເຈົ້າລັ່ນປາກກ່າວໄຂວາຈາວ່າ, ‘ເຮົາຄືພຣະເຈົ້າຢາເວ ພຣະເຈົ້າອົງອື່ນບໍ່ມີ.’” (ເອຊາຢາ 40:25, 26; 45:18). ມີຖ້ອຍຄຳຂຽນໄວ້ໃນພຣະທຳເພງສັນລະເສີນວ່າ: “ຈົ່ງຮູ້ເຖີດວ່າ ພຣະເຢໂຮວາຊົງເປັນພຣະເຈົ້າ ຄືພຣະອົງເອງທີ່ຊົງສ້າງເຮົາທັງຫຼາຍ ເຮົາບໍ່ໄດ້ສ້າງຕົວເອງຂຶ້ນ.” “ຈົ່ງເຂົ້າມາກົ້ມຂາບນະມັດສະການພຣະອົງ ຄຸ້ເຂົ່າລົງຕໍ່ໜ້າພຣະຜູ້ສ້າງຂອງພວກເຮົາ ຄືອົງພຣະຜູ້ເປັນເຈົ້າ.” (ເພງສັນລະເສີນ 100:3 TKJV; 95:6 LO2012). ສ່ວນບັນດາຜູ້ບໍຣິສຸດທີ່ນະມັດສະການພຣະເຈົ້າໃນສະຫວັນກໍໄດ້ກ່າວເຫດຜົນທີ່ພວກເພິ່ນຖວາຍຄວາມເຄົາລົບແດ່ພຣະອົງວ່າ: “ພຣະອົງສົມຄວນທີ່ຈະຮັບສະຫງ່າຣາສີ, ກຽດຕິຍົດ ແລະ ຣິດອຳນາດ, ເພາະວ່າພຣະອົງໄດ້ສ້າງທຸກສິ່ງ.” (ພຣະນິມິດ 4:11 LCV). *{GC 436.2}*

ໃນພຣະນິມິດບົດທີ 14, ມະນຸດຖືກເອີ້ນໃຫ້ນະມັດສະການພຣະຜູ້ສ້າງ. ຄຳພະຍາກອນນີ້ສະແດງໃຫ້ເຫັນກຸ່ມຄົນທີ່ເກີດຈາກຂ່າວປະເສີດສະຫວັນສາມອົງ ເຊິ່ງພວກເຂົາໄດ້ຮັກສາພຣະບັນຍັດຂອງພຣະເຈົ້າ. ໜຶ່ງໃນບັນດາພຣະບັນຍັດເຫຼົ່ານີ້ ຊີ້ເຖິງພຣະເຈົ້າໃນຖານະພຣະຜູ້ສ້າງໂດຍກົງ. ພຣະບັນຍັດຂໍ້ທີສີ່ກ່າວວ່າ: “ວັນທີເຈັດ ເປັນວັນສະບາໂຕຂອງພຣະເຈົ້າຢາເວ ພຣະເຈົ້າຂອງເຈົ້າ . . . ໃນຫົກວັນ ພຣະເຈົ້າຢາເວໄດ້ນິຣະມິດສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ, ທະເລ ແລະ ສັບພະທຸກສິ່ງທີ່ຢູ່ໃນນັ້ນ, ແຕ່ໃນວັນທີເຈັດໄດ້ພັກຜ່ອນ. ສະນັ້ນ, ພຣະເຈົ້າຢາເວຈຶ່ງອວຍພອນວັນສະບາໂຕ ແລະ ຕັ້ງໄວ້ເປັນວັນສັກສິດ.” (ອົບພະຍົບ 20:10, 11). ອົງພຣະຜູ້ເປັນເຈົ້າຊົງກ່າວເພີ່ມເຕີມກ່ຽວກັບວັນສະບາໂຕວ່າ ເປັນ “ໝາຍສຳຄັນ . . . ເພື່ອເຈົ້າຈະຊາບວ່າ ເຮົາຄືພຣະເຢໂຮວາ ເປັນພຣະເຈົ້າຂອງເຈົ້າ.” (ເອເຊກຽນ 20:20 TKJV). ພຣະອົງຊົງອະທິບາຍເຫດຜົນທີ່ວັນສະບາໂຕເປັນໝາຍສຳຄັນວ່າ: “ເພາະວ່າອົງພຣະຜູ້ເປັນເຈົ້າໄດ້ສ້າງຟ້າສະຫວັນ ແລະ ແຜ່ນດິນໂລກໃນຫົກວັນ ແລະ ໃນວັນທີເຈັດ ພຣະອົງໄດ້ຢຸດກິດຈະການທັງໝົດ ແລະ ພັກຜ່ອນ.” (ອົບພະຍົບ 31:17 LO2012). *{GC 437.1}*

“ຄວາມສຳຄັນຂອງວັນສະບາໂຕໃນຖານະເຄື່ອງເຕືອນໃຈເຖິງການຊົງສ້າງ ແມ່ນເພື່ອຊີ້ໃຫ້ເຫັນເຫດຜົນອັນແທ້ຈິງທີ່ພວກເຮົາຕ້ອງນະມັດສະການພຣະເຈົ້າ” ເພາະພຣະອົງຊົງເປັນພຣະຜູ້ສ້າງ ແລະ ພວກເຮົາເປັນຜູ້ທີ່ພຣະອົງຊົງສ້າງຂຶ້ນມາ. “ດັ່ງນັ້ນ, ວັນສະບາໂຕຈຶ່ງເປັນຮາກຖານຂອງການນະມັດສະການພຣະເຈົ້າ ເພາະມັນສອນຄວາມຈິງອັນສຳຄັນນີ້ຢ່າງເລິກເຊິ່ງທີ່ສຸດ ແລະ ບໍ່ມີຂໍ້ກຳນົດອື່ນໃດສາມາດສອນໄດ້ແບບນີ້. ຄວາມແຕກຕ່າງລະຫວ່າງພຣະຜູ້ສ້າງ ແລະ ສິ່ງທີ່ພຣະອົງຊົງສ້າງ ເປັນພື້ນຖານທີ່ແທ້ຈິງຂອງການນະມັດສະການທັງປວງ, ບໍ່ແມ່ນສະເພາະແຕ່ການນະມັດສະການໃນວັນທີເຈັດເທົ່ານັ້ນ. ຄວາມຈິງອັນສຳຄັນນີ້ຈະບໍ່ມີວັນລ້າສະໄໝ ແລະ ຕ້ອງຈົດຈຳໄວ້ຕະຫຼອດໄປ.”[2] ພຣະເຈົ້າຊົງສະຖາປະນາວັນ

[2] ເຈ. ເອັນ. ແອນດຣູ (J. N. Andrews), *ປະຫວັດວັນສະບາໂຕ*, ບົດທີ 27.

ສະບາໂຕໃນສວນເອເດນ ເພື່ອຮັກສາຄວາມຈິງນີ້ໄວ້ໃນຈິດໃຈຂອງມະນຸດຕະຫຼອດໄປ. ຕາບໃດທີ່ຄວາມເປັນພຣະຜູ້ສ້າງຂອງພຣະອົງ ຍັງເປັນເຫດຜົນໃຫ້ພວກເຮົານະມັດສະການພຣະອົງ, ວັນສະບາໂຕກໍຈະຍັງເປັນໝາຍສຳຄັນ ແລະ ເຄື່ອງເຕືອນໃຈຢູ່ຕາບນັ້ນ. ຖ້າທຸກຄົນໄດ້ຮັກສາວັນສະບາໂຕມາຕັ້ງແຕ່ສະໄໝເລີ່ມຕົ້ນ ມະນຸດຈະນັບຖືພຣະຜູ້ສ້າງໃນຖານະຜູ້ທີ່ສົມຄວນໄດ້ຮັບຄວາມຢຳເກງ ແລະ ຄວນໄດ້ຮັບການນະມັດສະການ; ຈະບໍ່ມີຜູ້ໃດຂາບໄຫວ້ຮູບເຄົາຣົບ, ບໍ່ມີຜູ້ປະຕິເສດພຣະເຈົ້າ ແລະ ຈະບໍ່ມີຄົນທີ່ບໍ່ເຊື່ອໃນພຣະອົງ. ການຮັກສາວັນສະບາໂຕ ເປັນການສະແດງຄວາມຈົງຮັກພັກດີຕໍ່ພຣະເຈົ້າອົງທ່ຽງແທ້, “ຜູ້ໄດ້ສ້າງຟ້າສະຫວັນ, ແຜ່ນດິນໂລກ, ທະເລ ແລະ ບໍ່ນ້ຳພຸທັງຫຼາຍ.” ສະນັ້ນ, ຂ່າວສານທີ່ສັ່ງໃຫ້ມະນຸດນະມັດສະການພຣະເຈົ້າ ແລະ ຮັກສາພຣະບັນຍັດຂອງພຣະອົງ ຈະເນັ້ນເປັນພິເສດໃຫ້ພວກເຂົາຮັກສາພຣະບັນຍັດຂໍ້ທີສີ່. *{GC 437.2}*

ທູດສະຫວັນອົງທີສາມ ໄດ້ຊີ້ໃຫ້ເຫັນກຸ່ມຄົນອີກພວກໜຶ່ງທີ່ແຕກຕ່າງຈາກຜູ້ທີ່ຮັກສາພຣະບັນຍັດຂອງພຣະເຈົ້າ ແລະ ມີຄວາມເຊື່ອໃນພຣະເຢຊູ. ຂ່າວສານນີ້ໄດ້ປະກາດຄຳເຕືອນອັນໜ້າຢ້ານກົວກ່ຽວກັບຄວາມເຊື່ອຜິດຂອງພວກເຂົາວ່າ: “ຖ້າຜູ້ໃດຂາບໄຫວ້ສັດຮ້າຍກັບຮູບຈຳລອງຂອງມັນ ແລະ ຮັບເຄື່ອງໝາຍຂອງມັນໄວ້ທີ່ໜ້າຜາກ ຫຼື ທີ່ມືຂອງຕົນ, ພວກເຂົາຈະຕ້ອງດື່ມເຫຼົ້າອະງຸ່ນແຫ່ງຄວາມໂກດຮ້າຍຂອງພຣະເຈົ້າ.” (ພຣະນິມິດ 14:9, 10 LCV). ຖ້າຢາກເຂົ້າໃຈຂໍ້ຄວາມນີ້ ຈະຕ້ອງຕີຄວາມໝາຍສັນຍະລັກເຫຼົ່ານີ້ໃຫ້ຖືກຕ້ອງ. ສັດຮ້າຍ, ຮູບຈຳລອງຂອງມັນ ແລະ ເຄື່ອງໝາຍຂອງມັນນັ້ນ ແມ່ນໝາຍເຖິງຫຍັງ? *{GC 438.1}*

ເປີດເຜີຍຕົວຕົນຂອງພະຍານາກ

ຄຳພະຍາກອນທີ່ກ່າວເຖິງສັນຍະລັກເຫຼົ່ານີ້ ເລີ່ມຕົ້ນຈາກພຣະນິມິດບົດທີ 12 ເຊິ່ງກ່າວເຖິງພະຍານາກທີ່ພະຍາຍາມທຳລາຍພຣະຄຣິສເມື່ອພຣະອົງຊົງບັງເກີດ ແລະ ກ່າວວ່າພະຍານາກນັ້ນຄືຊາຕານ (ເບິ່ງ ພຣະນິມິດ 12:9), ມັນເປັນຜູ້ທີ່ຊັກນຳໃຫ້ກະສັດເຮໂຣດພະຍາຍາມຂ້າພຣະ-ຜູ້ຊ່ວຍໃຫ້ລອດ. ແຕ່ໃນຊ່ວງສະຕະວັດຕົ້ນໆຂອງຄຣິສຕະສັກກະຫຼາດ, ຜູ້ຮັບໃຊ້ທີ່ສຳຄັນທີ່ສຸດຂອງຊາຕານໃນການຕໍ່ສູ້ກັບພຣະຄຣິສ ແລະ ໄພ່ພົນຂອງພຣະອົງກໍຄືອຳນາດອານາຈັກໂຣມ; ເຊິ່ງໃນເວລານັ້ນ, ຄົນສ່ວນໃຫຍ່ນັບຖືລັດທິນອກສາສະໜາ. ດັ່ງນັ້ນ, ເຖິງແມ່ນວ່າຄວາມໝາຍຫຼັກຂອງພະຍານາກແມ່ນຊາຕານ ແຕ່ອີກຄວາມໝາຍໜຶ່ງ ກໍແມ່ນອຳນາດອານາຈັກໂຣມທີ່ນອກສາສະໜານັ້ນເອງ. *{GC 438.2}*

ພຣະນິມິດບົດທີ 13:1–10 ໄດ້ບັນລະຍາຍເຖິງສັດຮ້າຍອີກໂຕໜຶ່ງ “ເໝືອນເສືອດາວ” ເຊິ່ງພະຍານາກໄດ້ມອບ “ຣິດເດດ ແລະ ບັນລັງກັບອຳນາດອັນໃຫຍ່ຫຼວງຂອງຕົນແກ່ສັດຮ້າຍນັ້ນ.” ສັນຍະລັກນີ້ ຕາມຄວາມເຊື່ອຂອງຊາວໂປຣແຕັສຕັງສ່ວນໃຫຍ່ ໝາຍເຖິງລະບອບສັນຕະປາປາທີ່ໄດ້ຮັບບັນລັງ ແລະ ສິດອຳນາດທີ່ເຄີຍເປັນຂອງອານາຈັກໂຣມໃນສະໄໝບູຮານ. ພຣະຄຳພີກ່າວເຖິງສັດທີ່ຄ້າຍຄືເສືອດາວນີ້ວ່າ: “ພຣະເຈົ້າຊົງອະນຸຍາດໃຫ້ສັດນັ້ນມີປາກເວົ້າຄຳຈອງຫອງ ແລະ ໝິ່ນປະໝາດ; . . . ມັນອ້າປາກເລີ່ມກ່າວຄຳໝິ່ນປະໝາດຕໍ່ພຣະເຈົ້າ ຕໍ່ພຣະນາມຂອງພຣະອົງ ຕໍ່ທີ່ສະຖິດຂອງພຣະອົງ ແລະ ຕໍ່ບັນດາຜູ້ທີ່ຢູ່ເທິງສະຫວັນທັງໝົດ. ແລະ ໄດ້ຊົງໃຫ້ມັນສູ້ຮົບກັບບັນດາໄພ່ພົນຂອງພຣະເຈົ້າ ແລະ ຂະນະພວກເຂົາ ຍັງຊົງປະທານໃຫ້ມັນມີອຳນາດເໜືອທຸກຕະກູນ, ທຸກຊົນຊາດ, ທຸກພາສາ ແລະ ທຸກປະເທດ.” ຄຳພະຍາກອນນີ້ຄ້າຍຄືກັນກັບຄຳບັນລະຍາຍກ່ຽວກັບເຂົານ້ອຍໆໃນພຣະທຳດານີເອນບົດທີ 7 ແລະ ຊີ້ໄປເຖິງລະບອບສັນຕະປາປາເໝືອນກັນຢ່າງບໍ່ມີຂໍ້ສົງໄສ. *{GC 439.1}*

“ຊົ່ງໃຫ້ມັນມີອຳນາດເຮັດຢ່າງນັ້ນຕະຫຼອດ 42 ເດືອນ.” ຜູ້ເຜີຍພຣະທຳຍັງກ່າວອ່າ: “ຫົວໜຶ່ງໃນ ບັນດາຫົວຂອງສັດຮ້າຍ ເບິ່ງເໝືອນກັບວ່າ ຖືກຟັນເຖິງແກ່ຄວາມຕາຍແລ້ວ;” ແລະຍັງກ່າວອີກວ່າ “ຖ້າ ຜູ້ໃດຈະກວາດເອົາຄົນໄປເປັນທາດ ຜູ້ນັ້ນຕ້ອງເຂົ້າເປັນທາດເອງ; ຖ້າຜູ້ໃດຈະຟັນຂ້າດ້ວຍດາບ ຜູ້ນັ້ນ ຕ້ອງຖືກຟັນຂ້າດ້ວຍດາບ.”[3] 42 ເດືອນນັ້ນແມ່ນໄລຍະເວລາດຽວກັນກັບ “ໜຶ່ງວາລະ ສອງວາລະ ກັບ ເຄິ່ງວາລະ,”[4] ສາມປີເຄິ່ງ ແລະ 1,260 ວັນ ຕາມທີ່ກ່າວໄວ້ໃນພຣະທຳດານີເອນບົດທີ 7. ນີ້ແມ່ນໄລຍະ ເວລາທີ່ລະບອບສັນຕະປາປາກົດຂຶ້ນເຫັງໄພ່ພົນຂອງພຣະເຈົ້າ. ດັ່ງທີ່ໄດ້ອະທິບາຍໄວ້ໃນບົດກ່ອນໜ້ານີ້ ໄລຍະເວລາດັ່ງກ່າວເລີ່ມຕົ້ນເມື່ອລະບອບສັນຕະປາປາຂຶ້ນສູ່ອຳນາດໃນປີ ຄ.ສ. 538 ແລະ ສິ້ນສຸດ ລົງໃນປີ 1798. ໃນເວລານັ້ນ, ກອງທັບຝຣັ່ງໄດ້ຈັບສັນຕະປາປາໄປເປັນຊະເລີຍ; ລະບອບສັນຕະປາປາ ໄດ້ຮັບບາດແຜເໝືອນຕາຍ ແລະ ຄຳພະຍາກອນກໍສຳເລັດທີ່ກ່າວວ່າ “ຖ້າຜູ້ໃດຈະກວາດເອົາຄົນໄປ ເປັນທາດ ຜູ້ນັ້ນຕ້ອງເຂົ້າເປັນທາດເອງ.” *{GC 439.2}*

ອຳນາດໃໝ່ປາກົດຕົວ

ໃນຕອນນີ້ມີສັນຍະລັກອີກອັນໜຶ່ງປາກົດຂຶ້ນ. ຜູ້ເຜີຍພຣະທຳກ່າວວ່າ: “ແລ້ວຂ້າພະເຈົ້າໄດ້ເຫັນ ສັດຮ້າຍໂຕທີສອງຂຶ້ນມາຈາກແຜ່ນດິນໂລກ. ມັນມີສອງເຂົາເໝືອນເຂົາແກະນ້ອຍ.” (ພຣະນິມິດ 13:11 LCV). ທັງຮູບລັກສະນະ ແລະ ວິທີປາກົດຕົວຂອງສັດຮ້າຍໂຕນີ້ຊີ້ບອກວ່າ ປະເທດທີ່ເກີດຂຶ້ນຕາມ ສັນຍະລັກດັ່ງກ່າວ ແມ່ນແຕກຕ່າງຈາກປະເທດທີ່ເປັນໄປຕາມສັນຍະລັກອື່ນກ່ອນໜ້ານີ້. ຜູ້ເຜີຍພຣະທຳ ດານີເອນເຫັນບັນດາມະຫາອານາຈັກທີ່ປົກຄອງໂລກໃນຮູບແບບສັນຍະລັກຂອງສັດຮ້າຍກິນຊີ້ນ ເຊິ່ງ ປາກົດຂຶ້ນເມື່ອ “ລົມທັງສີ່ຂອງຟ້າສະຫວັນກະພືທະເລໃຫຍ່ຈົນປັ່ນປ່ວນ.” (ດານີເອນ 7:2 NTV). ໃນ ພຣະນິມິດບົດທີ 17 ທູດສະຫວັນໄດ້ອະທິບາຍວ່າ “ນ້ຳ” ໝາຍເຖິງ “ບັນດາປະຊາຊົນ, ມວນ ຊົນ, ປະຊາຊາດ ແລະ ພາສາຕ່າງໆ.” (ພຣະນິມິດ 17:15 LCV). ສ່ວນລົມນັ້ນເປັນສັນຍະລັກຂອງ ຄວາມປັ່ນປ່ວນ. ລົມທັງສີ່ທິດທີ່ພັດເຂົ້າໃສ່ທະເລໃຫຍ່ ຈຶ່ງໝາຍເຖິງເຫດການອັນໜ້າຢ້ານກົວຂອງການ ຍຶດຄອງ ແລະ ການປະຕິວັດທີ່ເຮັດໃຫ້ບັນດາອານາຈັກໄດ້ຂຶ້ນມາມີອຳນາດ. *{GC 439.3}*

ແຕ່ສັດຮ້າຍທີ່ມີເຂົາເໝືອນແກະນ້ອຍນັ້ນ “ຂຶ້ນມາຈາກແຜ່ນດິນໂລກ” (ພຣະນິມິດ 13:11 LCV) ແທນທີ່ຈະໂຄ່ນລົ້ມອຳນາດອື່ນ ເພື່ອກໍ່ຕັ້ງຖານອຳນາດຂອງຕົນ. ສັນຍະລັກນີ້ໝາຍເຖິງປະເທດໜຶ່ງທີ່ຈະ ເກີດຂຶ້ນໃນດິນແດນທີ່ຫວ່າງເປົ່າ ແລະ ຈະເລີນເຕີບໂຕຂຶ້ນຢ່າງຊ້າໆດ້ວຍສັນຕິ. ສະນັ້ນ, ມັນຈຶ່ງບໍ່ ສາມາດເກີດຂຶ້ນໃນທ່າມກາງບັນດາປະເທດທີ່ແອອັດ ແລະ ແກ່ງແຍ້ງກັນໃນທະວີບອາຊີ, ອາຟຣິກາ ຫຼື ເອີຣົບ ອັນປຽບເໝືອນທະເລທີ່ປັ່ນປ່ວນດ້ວຍ “ບັນດາປະຊາຊົນ, ມວນຊົນ, ປະຊາຊາດ ແລະ ພາສາ ຕ່າງໆ.” (ພຣະນິມິດ 17:15 LCV). ປະເທດນີ້ຕ້ອງເກີດຂຶ້ນໃນທະວີບຕາເວັນຕົກ. *{GC 440.1}*

ປະເທດໃດໃນທະວີບອາເມຣິກາທີ່ກຳລັງກ້າວຂຶ້ນສູ່ອຳນາດໃນປີ 1798 ແລະ ສົ່ງສັນຍານເຖິງຄວາມ ເຂັ້ມແຂງອັນຍິ່ງໃຫຍ່ໃນອະນາຄົດ ຈົນດຶງດູດສາຍຕາຂອງຊາວໂລກ? ຄວາມໝາຍຂອງສັນຍະລັກນີ້ບໍ່ມີ ຂໍ້ສົງໄສ. ມີພຽງປະເທດດຽວເທົ່ານັ້ນທີ່ກົງກັບລາຍລະອຽດຂອງຄຳພະຍາກອນນີ້; ມັນຊີ້ບອກຢ່າງຈະແຈ້ງ ເຖິງປະເທດສະຫະລັດອາເມຣິກາ. ຫຼາຍຕໍ່ຫຼາຍເທື່ອ ນັກປາໄສ ແລະ ນັກປະຫວັດສາດໄດ້ນຳໃຊ້ແນວ ຄິດ ແລະ ເກືອບຈະແມ່ນຄຳເວົ້າດຽວກັນກັບຜູ້ຂຽນພຣະຄຳພີໂດຍບໍ່ຮູ້ຕົວ ໃນການອະທິບາຍເຖິງການ ເກີດຂຶ້ນ ແລະ ການເຕີບໃຫຍ່ຂອງປະເທດນີ້. ສັດຮ້າຍນັ້ນ “ຂຶ້ນມາຈາກແຜ່ນດິນໂລກ” ແລະ ຕາມ ທີ່ນັກແປພຣະຄຳພີອະທິບາຍ, ຄຳວ່າ “ຂຶ້ນມາ” ໃນພາສາເດີມແປວ່າ ‘ເຕີບໂຕ ຫຼື ແຕກໜໍ່ງອກ

[3] ສະບັບລາວບູຮານ.
[4] ດານີເອນ 7:25 TKJV.

ຂຶ້ນຄືກັບຕົ້ນໄມ້.' ນອກຈາກນັ້ນ, ຕາມທີ່ພວກເຮົາໄດ້ເຫັນແລ້ວ ປະເທດນີ້ຕ້ອງເກີດຂຶ້ນໃນດິນແດນທີ່ບໍ່ເຄີຍມີຜູ້ຄອບຄອງມາກ່ອນ. ນັກຂຽນທີ່ມີຊື່ສຽງຄົນໜຶ່ງ ໄດ້ອະທິບາຍເຖິງການເກີດຂຶ້ນຂອງສະຫະລັດອາເມຣິກາໂດຍກ່າວວ່າ: "ດ້ວຍ*ຄວາມເສີມລັບຂອງການປາກົດຂຶ້ນຈາກຄວາມຫວ່າງເປົ່າ*... ຄືກັບ*ແກ່ນພືດທີ່ງຽບສະຫງົບ,* ພວກເຮົາໄດ້ເຕີບໃຫຍ່ກາຍເປັນມະຫາອຳນາດ."[5] ວາລະສານຂອງເອີຣົບສະບັບໜຶ່ງໃນປີ 1850 ໄດ້ກ່າວເຖິງສະຫະລັດວ່າ ເປັນມະຫາອຳນາດທີ່ໜ້າອັດສະຈັນ ເຊິ່ງກຳລັງ 'ກ້າວຂຶ້ນມາ' ແລະ '*ທ່ານກາງຄວາມສະຫງົບຂອງແຜ່ນດິນໂລກ* ກຳລັງເພີ່ມພູນອຳນາດ ແລະ ຄວາມພາກພູມໃຈຂຶ້ນທຸກມື້ທຸກວັນ.'[6] ເອັດເວີດ ເອເວີເຣັດ ໄດ້ກ່າວໃນຄຳປາໄສກ່ຽວກັບກຸ່ມປົ່ນກຣົມທີ່ຊ່ວຍກັນກໍ່ຕັ້ງປະເທດອາເມຣິກາວ່າ: "ພວກເພິ່ນຊອກຫາບ່ອນທີ່ສະຫງົບ, ບໍ່ເປັນໄພຍ້ອນບໍ່ມີຄົນຮູ້ຈັກ ແລະ ປອດໄພຍ້ອນຢູ່ຫ່າງໄກ, ບ່ອນທີ່ຄຣິສຕະຈັກນ້ອຍ ໆ ແຫ່ງເມືອງເລເດັນ ຈະໄດ້ຮັບເສລີພາບທາງຈິດສຳນຶກບໍ? ຈົ່ງ*ເບິ່ງດິນແດນອັນກວ້າງໃຫຍ່*ທີ່ພວກເພິ່ນໄດ້*ຍຶດຄອງດ້ວຍສັນຕິວິທີ*... ພວກເພິ່ນໄດ້ຊູທຸງແຫ່ງໄມ້ກາງແຂນຂຶ້ນ!"[7] *{GC 440.2}*

"ມັນມີສອງເຂົາເໝືອນເຂົາແກະນ້ອຍ." (ພຣະນິມິດ 13:11 LCV). ເຂົາທີ່ເໝືອນແກະນ້ອຍນັ້ນ ໝາຍເຖິງຊາດທີ່ເກີດໃໝ່, ຄວາມບໍຣິສຸດ ແລະ ຄວາມອ່ອນໂຍນ, ເຊິ່ງກົງກັບລັກສະນະຂອງປະເທດສະຫະລັດອາເມຣິກາ ເມື່ອຜູ້ເຜີຍພຣະທຳໄດ້ເຫັນມັນ "ຂຶ້ນມາ" ໃນປີ 1798. ໃນບັນດາຄຣິສຕຽນກຸ່ມທຳອິດທີ່ໜີໄປອາເມຣິກາ ເພື່ອຊອກຫາບ່ອນລີ້ໄພຈາກການກົດຂີ່ຂອງກະສັດ ແລະ ການບີບບັງຄັບທາງສາສະໜາຂອງພວກບາດຫຼວງນັ້ນ ມີຫຼາຍຄົນໄດ້ຕັດສິນໃຈສ້າງຕັ້ງລັດຖະບານເທິງພື້ນຖານອັນກວ້າງຂວາງແຫ່ງສິດທິບຸກຄົນ ແລະ ເສລີພາບທາງສາສະໜາ. ແນວຄິດຂອງພວກເຂົາໄດ້ປາກົດໃນຄຳປະກາດເອກະລາດ ເຊິ່ງປະກາດຄວາມຈິງອັນຍິ່ງໃຫຍ່ວ່າ "ມະນຸດທຸກຄົນຖືກສ້າງຂຶ້ນມາເທົ່າທຽມກັນ" ແລະ ມີສິດທິອັນບໍ່ອາດພາກໄປໄດ້ໃນ "ຊີວິດ, ເສລີພາບ ແລະ ການຊອກຫາຄວາມສຸກ." ລັດຖະທຳມະນູນຍັງໄດ້ຮັບປະກັນສິດທິໃນການປົກຄອງຕົນເອງຂອງປະຊາຊົນ ໂດຍກຳນົດໃຫ້ຜູ້ຕາງໜ້າທີ່ຖືກເລືອກຕັ້ງຈາກປະຊາຊົນເປັນຜູ້ອອກກົດໝາຍ ແລະ ບໍລິຫານປະເທດ. ເສລີພາບໃນການນັບຖືສາສະໜາກໍໄດ້ຖືກຮັບຮອງ; ທຸກຄົນມີສິດນະມັດສະການພຣະເຈົ້າຕາມຄວາມເຊື່ອຂອງຕົນ. ຫຼັກການຂອງລະບອບສາທາລະນະລັດ ແລະ ນິກາຍໂປຣແຕັສຕັງໄດ້ກາຍເປັນເສົາຄ້ຳຂອງຊາດ. ຫຼັກການເຫຼົ່ານີ້ເປັນເຄັດລັບແຫ່ງອຳນາດ ແລະ ຄວາມຈະເລີນຮຸ່ງເຮືອງຂອງມັນ. ຜູ້ທີ່ຖືກກົດຂີ່ຂົ່ມເຫັງໃນປະເທດທັ່ງຫຼາຍທີ່ມີການນັບຖືສາສະໜາຄຣິສ ຕ່າງກໍຫັນມາເບິ່ງແຜ່ນດິນນີ້ດ້ວຍຄວາມສົນໃຈ ແລະ ຄວາມຫວັງ. ຫຼາຍລ້ານຄົນໄດ້ເດີນທາງມາຕັ້ງຖິ່ນຖານໃນສະຫະລັດອາເມຣິກາ ແລະ ປະເທດນັ້ນກໍໄດ້ກ້າວຂຶ້ນເປັນໜຶ່ງໃນບັນດາປະເທດທີ່ມີອຳນາດທີ່ສຸດໃນໂລກ. *{GC 441.1}*

ການກະທຳບໍ່ກົງກັບຄຳອ້າງ

ເຖິງຢ່າງໃດກໍຕາມ, ສັດຮ້າຍທີ່ມີເຂົາເໝືອນແກະນ້ອຍນັ້ນ "ເວົ້າເໝືອນກັບພະຍານາກ. ມັນເປັນໂຕແທນຂອງການໃຊ້ສິດອຳນາດທັງໝົດຂອງສັດຮ້າຍໂຕທຳອິດ ແລະ ເຮັດໃຫ້ໂລກກັບຄົນທັ່ງຫຼາຍທີ່ຢູ່ໃນແຜ່ນດິນໂລກ ຂາບໄຫວ້ສັດຮ້າຍໂຕທຳອິດ ເຊິ່ງເຄີຍມີບາດແຜທີ່ເຮັດໃຫ້ເຖິງຕາຍ ແຕ່ຫາຍດີແລ້ວ; ... ມັນຫຼອກລວງຄົນທັ່ງຫຼາຍທີ່ຢູ່ໃນແຜ່ນດິນໂລກ. ມັນສັ່ງໃຫ້ພວກເຂົາສ້າງຮູບຈຳລອງຂຶ້ນ

[5] ຈີ. ເອ. ທາວເຊັນ (G. A. Townsend), *ໂລກໃໝ່ປຽບທຽບກັບໂລກເກົ່າ*, ໜ້າ 462.

[6] ເດີ *ດັບລິນ ເນຊັນ* (The Dublin Nation).

[7] ຄຳປາໄສທີ່ເມືອງພລີມັດ (Speech delivered at Plymouth), ລັດແມັສຊາຊູເສັດ, 22 ທັນວາ 1824, ໜ້າ 11.

ເພື່ອເປັນກຽດແກ່ສັດຮ້າຍທີ່ຖືກບາດເຈັບດ້ວຍດາບ ແຕ່ຍັງບໍ່ຕາຍນັ້ນ.” (ພຣະນິມິດ 13:11–14 LCV). {GC 441.2}

ເຂົາທີ່ມີລັກສະນະຄືແກະນ້ອຍ ແລະ ການເວົ້າເໝືອນພະຍານາກຂອງສັນຍະລັກນີ້ ຊີ້ໃຫ້ເຫັນເຖິງຄວາມຂັດແຍ້ງທີ່ເດັ່ນຊັດລະຫວ່າງຄຳອວດອ້າງ ແລະ ການປະຕິບັດຂອງປະເທດດັ່ງກ່າວ. “ການເວົ້າ” ຂອງປະເທດນີ້ແມ່ນການກະທຳຂອງອຳນາດຝ່າຍນິຕິບັນຍັດ ແລະ ເຈົ້າໜ້າທີ່ຝ່າຍຕຸລາການ. ເມື່ອເປັນເຊັ່ນນີ້, ມັນຈະບິດເບືອນຫຼັກການແຫ່ງເສລີພາບ ແລະ ສັນຕິພາບທີ່ຕົນເຄີຍວາງໄວ້ເປັນພື້ນຖານຂອງນະໂຍບາຍ. ເມື່ອຄຳທຳນວາຍໄດ້ກ່າວວ່າ ປະເທດນີ້ຈະເວົ້າ “ເໝືອນກັບພະຍານາກ” ແລະ “ໃຊ້ສິດອຳນາດທັງໝົດຂອງສັດຮ້າຍໂຕທຳອິດ,” ເປັນການທຳນວາຍຢ່າງຈະແຈ້ງວ່າ ປະເທດດັ່ງກ່າວຈະມີທ່າທີກົດຂີ່ຂົ່ມເຫັງ ແລະ ຈະບໍ່ຍອມຮັບຜູ້ອື່ນ ຄືກັນກັບປະເທດທີ່ມີສັນຍະລັກຂອງພະຍານາກ ແລະ ປະເທດທີ່ມີສັນຍະລັກເໝືອນສັດຮ້າຍຄ້າຍເສືອດາວ. ພຣະຄຳພີກ່າວວ່າ ສັດຮ້າຍທີ່ມີເຂົາສອງເຂົາ ຈະ “ເຮັດໃຫ້ໂລກກັບຄົນທັງຫຼາຍທີ່ຢູ່ໃນແຜ່ນດິນໂລກ ຂາບໄຫວ້ສັດຮ້າຍໂຕທຳອິດ.” ຂໍ້ນີ້ຊີ້ໃຫ້ເຫັນວ່າປະເທດດັ່ງກ່າວ ຈະໃຊ້ອຳນາດບັງຄັບໃຫ້ມີການປະຕິບັດ ໃນລັກສະນະທີ່ເປັນການຍອມຢູ່ໃຕ້ອຳນາດຂອງລະບອບສັນຕະປາປາ. {GC 442.1}

ການກະທຳເຊັ່ນນັ້ນ, ຈະຂັດກັບຫຼັກການປົກຄອງຂອງສະຫະລັດ, ຂັດກັບລັກສະນະພື້ນຖານຂອງສະຖາບັນປະຊາທິປະໄຕ, ຂັດກັບຄຳປະກາດເອກະລາດທີ່ໄດ້ຮັບການຮັບຮອງຢ່າງໜັກແໜ້ນ ແລະ ຈິງຈັງ, ແລະ ຂັດກັບລັດຖະທຳມະນູນ. ບັນດາຜູ້ສ້າງຕັ້ງປະເທດມີວິໄສທັດ ທີ່ຈະປ້ອງກັນບໍ່ໃຫ້ຄຣິສຕະຈັກນຳໃຊ້ອຳນາດລັດ ເຊິ່ງຈະນຳໄປສູ່ຜົນທີ່ຫຼີກລ່ຽງບໍ່ໄດ້ ຄືການບໍ່ຍອມຮັບຄວາມແຕກຕ່າງ ແລະ ການກົດຂີ່ຂົ່ມເຫັງ. ລັດຖະທຳມະນູນກຳນົດໄວ້ວ່າ “ລັດຖະສະພາຈະບໍ່ອອກກົດໝາຍໃດໆກ່ຽວກັບການສະຖາປະນາສາສະໜາ ຫຼື ຫ້າມການປະຕິບັດທາງສາສະໜາຢ່າງເສລີ” ແລະ ຍັງ “ຫ້າມກຳນົດເງື່ອນໄຂທາງສາສະໜາສຳລັບການດຳລົງຕຳແໜ່ງ ຫຼື ໜ້າທີ່ສາທາລະນະໃດໆ ໃນສະຫະລັດອາເມຣິກາ.” ການບັງຄັບໃຫ້ມີການປະຕິບັດທາງສາສະໜາໂດຍອຳນາດລັດ ຈະເກີດຂຶ້ນໄດ້ກໍຕໍ່ເມື່ອມີການລະເມີດຫຼັກປະກັນແຫ່ງເສລີພາບຂອງປະເທດຢ່າງຮ້າຍແຮງເທົ່ານັ້ນ. ແຕ່ການກະທຳທີ່ຂັດກັບຫຼັກການນີ້ ແມ່ນສິ່ງທີ່ຖືກທຳນວາຍໄວ້ແລ້ວຜ່ານຮູບສັນຍະລັກ. ມັນຄືສັດຮ້າຍທີ່ມີເຂົາຄືແກະນ້ອຍ, ມັນອ້າງວ່າບໍຣິສຸດ, ອ່ອນໂຍນ ແລະ ບໍ່ເປັນອັນຕະລາຍ, ແຕ່ປາກົດວ່າ ມັນເວົ້າຄືພະຍານາກ. {GC 442.2}

“ມັນສັ່ງໃຫ້ຄົນທັງຫຼາຍທີ່ຢູ່ໃນໂລກສ້າງຮູບຈຳລອງໃຫ້ແກ່ສັດຮ້າຍ.” (ພຣະນິມິດ 13:14 TKJV). ໃນຂໍ້ນີ້ປະຊາຊົນເປັນຜູ້ຖືກບອກໃຫ້ສ້າງຮູບຈຳລອງຂຶ້ນມາ ເຊິ່ງສະແດງໃຫ້ເຫັນເຖິງຮູບແບບການປົກຄອງ ທີ່ມອບອຳນາດນິຕິບັນຍັດໃຫ້ແກ່ປະຊາຊົນ. ສິ່ງນີ້ເປັນຫຼັກຖານອັນແຈ່ມແຈ້ງທີ່ສຸດວ່າ ສະຫະລັດອາເມຣິກາ ແມ່ນປະເທດທີ່ຖືກກ່າວເຖິງໃນຄຳພະຍາກອນ. {GC 442.3}

“ຮູບຈຳລອງໃຫ້ແກ່ສັດຮ້າຍ” ແມ່ນຫຍັງ? ແລະ ມັນຈະຖືກສ້າງຂຶ້ນມາແນວໃດ? ຮູບຈຳລອງນີ້ຖືກສ້າງຂຶ້ນໂດຍສັດຮ້າຍທີ່ມີສອງເຂົາ ແລະ ເປັນຮູບຈຳລອງ*ໃຫ້ແກ່*ສັດຮ້າຍໂຕທຳອິດ. ມັນຍັງຖືກເອີ້ນວ່າ ຮູບຈຳລອງ*ຂອງ*ສັດຮ້າຍ. ສະນັ້ນ, ເພື່ອຈະຮູ້ວ່າຮູບຈຳລອງນີ້ເປັນແນວໃດ ແລະ ມັນຈະຖືກສ້າງຂຶ້ນແນວໃດ ພວກເຮົາຕ້ອງສຶກສາລັກສະນະຂອງສັດຮ້າຍເອງ, ນັ້ນກໍຄືລະບອບສັນຕະປາປາ. {GC 443.1}

ເມື່ອຄຣິສຕະຈັກໃນຍຸກເລີ່ມຕົ້ນເສື່ອມລົງ ຍ້ອນການປະຖິ້ມຄວາມລຽບງ່າຍຂອງຂ່າວປະເສີດ ແລະ ການຮັບເອົາພິທີກຳກັບຮີດຄອງຂອງຄົນທີ່ບໍ່ນັບຖືພຣະເຈົ້າ, ຄຣິສຕະຈັກກໍໄດ້ສູນເສຍພຣະວິນຍານ ແລະ ຣິດອຳນາດຂອງພຣະເຈົ້າ. ເພື່ອຈະຄວບຄຸມຈິດສຳນຶກຂອງປະຊາຊົນ ຄຣິສຕະຈັກຈຶ່ງຂໍແຮງສະໜັບສະໜູນຈາກອຳນາດລັດ. ຜົນທີ່ຕາມມາກໍຄືລະບອບສັນຕະປາປາ ເຊິ່ງເປັນຄຣິສຕະຈັກທີ່

ຄວບຄຸມອຳນາດລັດ ແລະ ນຳໃຊ້ອຳນາດລັດເພື່ອຈຸດປະສົງຂອງຕົນເອງ ໂດຍສະເພາະແມ່ນການລົງໂທດ 'ຄົນທີ່ເຊື່ອຄຳສອນນອກຮີດ.' ຖ້າສະຫະລັດອາເມຣິກາຈະສ້າງຮູບຈຳລອງຂອງສັດຮ້າຍ, ສະແດງວ່າອຳນາດທາງສາສະໜາ ຈະຕ້ອງຄວບຄຸມອຳນາດການປົກຄອງໃຫ້ໄດ້ເສຍກ່ອນ; ຄຣິສຕະຈັກຈຶ່ງຈະສາມາດນຳໃຊ້ອຳນາດລັດເພື່ອບັນລຸຈຸດປະສົງຂອງຕົນ. *{GC 443.2}*

ທຸກຄັ້ງທີ່ຄຣິສຕະຈັກໄດ້ອຳນາດຝ່າຍການປົກຄອງ ຄຣິສຕະຈັກກໍໃຊ້ອຳນາດນັ້ນລົງໂທດຜູ້ທີ່ບໍ່ເຫັນພ້ອມກັບຄຳສອນຂອງຕົນ. ຄຣິສຕະຈັກໂປຣແຕັສຕັງທີ່ເຮັດຕາມຮູບແບບຂອງຄຣິສຕະຈັກໂຣມ ໂດຍການສ້າງພັນທະມິດກັບອຳນາດລັດ ກໍສະແດງຄວາມປາຖະໜາແບບດຽວກັນທີ່ຈະຈຳກັດເສລີພາບທາງຈິດສຳນຶກ. ຕົວຢ່າງໜຶ່ງ, ແມ່ນການຂົ່ມເຫັງຢ່າງຍາວນານຂອງຄຣິສຕະຈັກແຫ່ງອັງກິດ ຕໍ່ຜູ້ທີ່ແຍກຕົວອອກຈາກຄຣິສຕະຈັກ. ໃນສະຕະວັດທີ 16 ແລະ 17 ອາຈານສອນສາສະໜາຄຣິສນອກນິກາຍຫຼາຍພັນຄົນ ຖືກບັງຄັບໃຫ້ໜີຈາກຄຣິສຕະຈັກຂອງຕົນ ແລະ ຫຼາຍຄົນທັງອາຈານ ແລະ ສະມາຊິກຕ້ອງຖືກປັບໃໝ, ຖືກຈຳຄຸກ, ຖືກທໍລະມານ ແລະ ຖືກປະຫານຊີວິດເພາະບໍ່ຍອມປະຖິ້ມຄວາມເຊື່ອ. *{GC 443.3}*

ການປະຖິ້ມຄວາມເຊື່ອນັ້ນເອງ ທີ່ເປັນສາເຫດໃຫ້ຄຣິສຕະຈັກໃນຍຸກເລີ່ມຕົ້ນ ຂອກຫາແຮງສະໜັບສະໜູນຈາກອຳນາດລັດ; ແລະການກະທຳນີ້ໄດ້ກຽມທາງໃຫ້ແກ່ການກໍ່ຕັ້ງລະບອບສັນຕະປາປາ ກໍຄືສັດຮ້າຍ. ອາຈານໂປໂລກ່າວວ່າ: "ການກະບົດຈະເກີດຂຶ້ນ ແລະ ຄົນລ່ວງລະເມີດ . . .[ຈະ] ປາກົດໂຕ." (2 ເທສະໂລນິກ 2:3 LCV). ສະນັ້ນ, ການປະຖິ້ມຄວາມເຊື່ອໃນຄຣິສຕະຈັກ ຈະກຽມທາງໃຫ້ແກ່ຮູບຈຳລອງຂອງສັດຮ້າຍ. *{GC 443.4}*

ພຣະຄຳພີກ່າວໄວ້ວ່າ ກ່ອນການສະເດັດມາຂອງອົງພຣະຜູ້ເປັນເຈົ້າ ຈະເກີດການເສື່ອມຖອຍທາງສາສະໜາ ຄ້າຍຄືກັບສະພາບການໃນສະຕະວັດຕົ້ນ ໆ. "ແຕ່ຈົ່ງຮູ້ໄວ້ວ່າ: ຈະມີຊ່ວງເວລາທີ່ໂຫດຮ້າຍໃນຍຸກສຸດທ້າຍ. ຄົນທັງຫຼາຍ*ຈະເປັນຄົນຮັກຕົນເອງ*, ເປັນຄົນຮັກເງິນ, ໂອ້ອວດ, ຈອງຫອງ, ປ້ອຍດ່າ, ບໍ່ເຊື່ອຟັງພໍ່ແມ່ຂອງຕົນ, ເນລະຄຸນ, ບໍ່ບໍຣິສຸດ, ປາສະຈາກຄວາມຮັກ, ບໍ່ໃຫ້ອະໄພ, ມັກໃສ່ຮ້າຍປ້າຍສີ, ປາສະຈາກການຄວບຄຸມຕົນເອງ, ຮ້າຍກາດ, *ບໍ່ເປັນຄົນຮັກຄວາມດີ*, ເປັນຄົນທໍລະຍົດ, ໃຈຮ້ອນ, ອວດດີ, ເປັນຄົນ*ຮັກຄວາມສະໜຸກຫຼາຍກວ່າຮັກພຣະເຈົ້າ*, *ຍຶດຖືທາງຂອງພຣະເຈົ້າພຽງເປືອກນອກ* ແຕ່ປະຕິເສດຣິດອຳນາດຂອງພຣະເຈົ້າ." (2 ຕີໂມທຽວ 3:1–5 LCV). "ພຣະວິນຍານກ່າວໄວ້ຢ່າງຈະແຈ້ງແລ້ວວ່າ ໃນພາຍຫຼັງມາ ຈະມີບາງຄົນປະຖິ້ມຄວາມເຊື່ອ ແລ້ວໄປຕິດຕາມວິນຍານຫຼອກລວງ ແລະ ສິ່ງຕ່າງ ໆ ທີ່ສອນໂດຍພວກຜີມານຮ້າຍ." (1 ຕີໂມທຽວ 4:1 LCV). ຊາຕານຈະເຄື່ອນໄຫວໂດຍ "ໃຊ້ການສະແດງອຳນາດທຸກຮູບແບບ ຜ່ານທາງໝາຍສຳຄັນ ແລະ ການອັດສະຈັນ ເຊິ່ງລ້ວນແຕ່ຮັບໃຊ້ຄວາມຕົວະ ແລະ ໃຊ້ຄວາມຊົ່ວຮ້າຍທຸກຢ່າງ ຫຼອກລວງບັນດາຜູ້ທີ່ກຳລັງຈະຈິບຫາຍ. ພວກເຂົາຈິບຫາຍ ເພາະພວກເຂົາປະຕິເສດທີ່ຈະຮັກຄວາມຈິງທີ່ນຳໄປສູ່ຄວາມພົ້ນ." ສະນັ້ນ, ພວກເຂົາຈະຖືກປະຖິ້ມໃຫ້ຫຼົງໄປຕາມການຫຼອກລວງ "ເພື່ອວ່າພວກເຂົາຈະເຊື່ອຄວາມຕົວະ." (2 ເທສະໂລນິກ 2:9–11 LCV). ເມື່ອສະພາບການປະຕິເສດພຣະເຈົ້າເຖິງລະດັບນີ້, ຜົນທີ່ຕາມມາກໍຈະເປັນເໝືອນດັ່ງໃນສະຕະວັດຕົ້ນ ໆ. *{GC 444.1}*

ຫຼາຍຄົນເຫັນວ່າ ຄວາມເຊື່ອທີ່ແຕກຕ່າງກັນໃນບັນດາຄຣິສຕະຈັກໂປຣແຕັສຕັງ ເປັນຫຼັກຖານຢ່າງຈະແຈ້ງວ່າ ຈະບໍ່ມີການບັງຄັບໃຫ້ທຸກຄົນເຊື່ອແບບດຽວກັນໄດ້. ແຕ່ໃນຫຼາຍປີຜ່ານມາ, ບັນດາຄຣິສຕະຈັກໂປຣແຕັສຕັງ ມີຄວາມມຸ່ງມາດປາຖະໜາ ທີ່ຈະຮ່ວມກັນເປັນໜຶ່ງດຽວບົນພື້ນຖານຫຼັກຄຳສອນທີ່ເຫັນພ້ອມກັນ ແລະ ຄວາມປາຖະໜານີ້ກໍເພີ່ມຂຶ້ນເລື້ອຍ ໆ. ເພື່ອໃຫ້ບັນລຸເປົ້າໝາຍນີ້ ພວກເຂົາ

ຈົ່ງຈຳເປັນຕ້ອງຢຸດການສົນທະນາໃນຫົວຂໍ້ທີ່ຍັງຂັດແຍ້ງກັນຢູ່, ເຖິງແມ່ນວ່າຫົວຂໍ້ເຫຼົ່ານັ້ນ ຈະສຳຄັນ ຫຼາຍໃນແງ່ຂອງພຣະຄຳພີກໍຕາມ. {GC 444.2}

ອາຈານ ຊານສ໌ ບີເຊີ ໄດ້ປະກາດໃນຄຳເທດສະໜາປີ 1846 ວ່າ ບັນດາຜູ້ຮັບໃຊ້ຂອງ "ນິກາຍ ໂປຣແຕັສຕັງທີ່ເຊື່ອໃນຂ່າວປະເສີດ" ບໍ່ພຽງແຕ່ "ຖືກສ້າງຕັ້ງຂຶ້ນພາຍໃຕ້ແຮງກົດດັນຈາກຄວາມຢ້ານກົວ ຂອງມະນຸດເທົ່ານັ້ນ, ແຕ່ພວກເຂົາຍັງດຳເນີນຊີວິດ ແລະ ເຄື່ອນໄຫວຢູ່ໃນສະພາບທີ່ເສື່ອມຊາມຢ່າງ ຮຸນແຮງ. ທຸກ ໆ ຊົ່ວໂມງພວກຜູ້ຮັບໃຊ້ ກຳອ່ອນຂໍ້ຕໍ່ສິ່ງທີ່ຕ່ຳຊ້າໃນຕົວເອງ ເພື່ອປົກປິດຄວາມຈິງ ແລະ ກົ້ມ ຂາບຕໍ່ອຳນາດຂອງການປະຖິ້ມຄວາມເຊື່ອ. ບໍ່ແມ່ນສິ່ງນີ້ບໍທີ່ເກີດຂຶ້ນກັບຄຣິສຕະຈັກໂຣມ? ພວກເຮົາ ກຳລັງດຳເນີນຊີວິດຄືກັບພວກເຂົາອີກບໍ່ແມ່ນບໍ? ແລ້ວພວກເຮົາເຫັນຫຍັງຢູ່ເບື້ອງໜ້າ? ຈະມີການຈັດ ສະພາໃຫຍ່ອີກແລ້ວ ແລະ ການປະຊຸມຄຣິສຕຽນທົ່ວໂລກ! ແລະຈະມີພັນທະມິດລະຫວ່າງຄຣິສຕະຈັກ ທີ່ເຊື່ອໃນຂ່າວປະເສີດ ແລະ ການຕັ້ງຫຼັກຂໍ້ເຊື່ອສາກົນເກີດຂຶ້ນ!"[8] ເມື່ອເປົ້າໝາຍນີ້ສຳເລັດແລ້ວ ການ ບີບບັງຄັບກໍຈະຕາມມາໃນບໍ່ຊ້າ ເພື່ອຮັກສາຄວາມເປັນອັນໜຶ່ງອັນດຽວກັນ. {GC 444.3}

ເມື່ອບັນດາຄຣິສຕະຈັກຊັ້ນນຳໃນສະຫະລັດອາເມຣິກາຮ່ວມເປັນອັນໜຶ່ງອັນດຽວກັນໃນຫຼັກຄຳສອນ ທີ່ພວກເຂົາເຫັນດີນຳກັນ ແລະ ກົດດັນລັດຖະບານໃຫ້ບັງຄັບປະຊາຊົນໃຫ້ປະຕິບັດຕາມກົດລະບຽບ ຂອງຄຣິສຕະຈັກ ແລະ ສະໜັບສະໜຸນສະຖາບັນຂອງພວກເຂົາ, ເມື່ອນັ້ນແຫຼະກໍສະແດງວ່າ, ນິກາຍ ໂປຣແຕັສຕັງໃນອາເມຣິກາໄດ້ສ້າງຮູບຈຳລອງຂອງລະບອບສັນຕະປາປາສຳເລັດແລ້ວ ແລະ ການລົງໂທດ ໂດຍອຳນາດລັດຕໍ່ຜູ້ທີ່ມີຄວາມເຊື່ອແຕກຕ່າງກໍຈະເກີດຂຶ້ນຢ່າງຫຼີກລ່ຽງບໍ່ໄດ້. {GC 445.1}

ສັດຮ້າຍ ແລະ ຮູບຈຳລອງຂອງມັນ

ສັດຮ້າຍທີ່ມີສອງເຂົາ "ບັງຄັບທຸກຄົນທັງຜູ້ໃຫຍ່ ແລະ ຜູ້ນ້ອຍ, ຄົນຮັ່ງມີ ແລະ ຄົນຍາກຈົນ, ຂ້າທາດ ຫຼື ອິດສະຫຼະ ໃຫ້ຮັບເຄື່ອງໝາຍໄວ້ທີ່ມືຂວາ ຫຼື ທີ່ໜ້າຜາກຂອງພວກເຂົາ, ເພື່ອບໍ່ໃຫ້ຜູ້ໃດ ເຮັດການຊື້ ຫຼື ຂາຍໄດ້ ເວັ້ນໄວ້ແຕ່ພວກເຂົາຈະມີເຄື່ອງໝາຍ, ເຊິ່ງເປັນຊື່ຂອງສັດຮ້າຍ ຫຼື ໂຕເລກ ປະຈຳຊື່ຂອງສັດຮ້າຍນັ້ນ." (ພຣະນິມິດ 13:16, 17 LCV). ທູດສະຫວັນອົງທີສາມເຕືອນວ່າ: "ຖ້າ ຜູ້ໃດຂາບໄຫວ້ສັດຮ້າຍກັບຮູບຈຳລອງຂອງມັນ ແລະ ຮັບເຄື່ອງໝາຍຂອງມັນໄວ້ທີ່ໜ້າຜາກ ຫຼື ທີ່ມື ຂອງຕົນ, ພວກເຂົາຈະຕ້ອງດື່ມເຫຼົ້າອະງຸ່ນແຫ່ງຄວາມໂກດຮ້າຍຂອງພຣະເຈົ້າ." (ພຣະນິມິດ 14:9–10 LCV). "ສັດຮ້າຍ" ທີ່ກ່າວເຖິງໃນຂໍ້ຄວາມນີ້ ໝາຍເຖິງສັດຮ້າຍໂຕທຳອິດທີ່ຄ້າຍຄືເສືອດາວໃນພຣະນິມິດ ບົດທີ 13 ເຊິ່ງສັດຮ້າຍທີ່ມີເຂົາສອງເຂົາ ຈະບັງຄັບໃຫ້ຜູ້ຄົນນະມັດສະການສັດຮ້າຍໂຕທຳອິດນັ້ນ ກໍຄື ລະບອບສັນຕະປາປານັ້ນເອງ. "ຮູບຈຳລອງຂອງສັດຮ້າຍ" ໝາຍເຖິງສິ່ງທີ່ຈະເກີດຂຶ້ນ ເມື່ອນິກາຍ ໂປຣແຕັສຕັງປະຖິ້ມຄວາມເຊື່ອ ແລ້ວໄປຂໍໃຫ້ອຳນາດຝ່າຍປົກຄອງບັງຄັບປະຊາຊົນໃຫ້ປະຕິບັດຕາມ ຫຼັກຄຳສອນຂອງພວກເຂົາ. ສ່ວນຄວາມໝາຍຂອງ "ເຄື່ອງໝາຍຂອງສັດຮ້າຍ" ນັ້ນ ຈະໄດ້ອະທິບາຍ ໃນພາຍຫຼັງ. {GC 445.2}

ຫຼັງຈາກຄຳເຕືອນກ່ຽວກັບການນະມັດສະການສັດຮ້າຍ ແລະ ຮູບຈຳລອງຂອງມັນແລ້ວ, ຄຳ ພະຍາກອນໄດ້ກ່າວວ່າ: "ໃນເລື່ອງນີ້ພວກໄພ່ພົນຂອງພຣະເຈົ້າ ຄືຜູ້ທີ່ຮັກສາກົດບັນຍັດຂອງພຣະເຈົ້າ ແລະ ຄວາມເຊື່ອຝ່າຍພຣະເຢຊູເຈົ້າ ກໍຕ້ອງໃຊ້ຄວາມພຽນອົດທົນ." (ພຣະນິມິດ 14:12). ສອງຝ່າຍຕໍ່ໄປ ນີ້ຢູ່ຝ່າຍກົງກັນຂ້າມກັນ: ຝ່າຍທີໜຶ່ງ, ແມ່ນຜູ້ທີ່ຮັກສາພຣະບັນຍັດຂອງພຣະເຈົ້າ; ອີກຝ່າຍໜຶ່ງ, ແມ່ນ ຜູ້ທີ່ນະມັດສະການສັດຮ້າຍກັບຮູບຈຳລອງຂອງມັນ ແລະ ຮັບເອົາເຄື່ອງໝາຍຂອງມັນ. ສະນັ້ນ, ການ

[8] ຄຳເທດສະໜາເລື່ອງ "ພຣະຄຳພີເປັນຫຼັກຄວາມເຊື່ອທີ່ພຽງພໍ;" ເຊິ່ງເທດທີ່ເມືອງຟັອດເວນ, ລັດອິນດີແອນາ, ວັນທີ 22 ກຸມພາ 1846.

ຮັກສາພຣະບັນຍັດຂອງພຣະເຈົ້າ ແລະ ການລະເມີດພຣະບັນຍັດຂອງພຣະອົງ ຈະເປັນເຄື່ອງໝາຍທີ່ແຍກຜູ້ນະມັດສະການພຣະເຈົ້າ ອອກຈາກຜູ້ນະມັດສະການສັດຮ້າຍ. *{GC 445.3}*

ລັກສະນະພິເສດຂອງສັດຮ້າຍ ແລະ ຮູບຈຳລອງຂອງມັນ ແມ່ນການລະເມີດພຣະບັນຍັດຂອງພຣະເຈົ້າ. ດານີເອນກ່າວເຖິງເຂົານ້ອຍໆ ເຊິ່ງໝາຍເຖິງລະບອບສັນຕະປາປາວ່າ: “ເພິ່ນຈະພະຍາຍາມປ່ຽນແປງກົດໝາຍ ແລະ ວັນສະຫຼອງຕ່າງໆ ທາງສາສະໜາ.” (ດານີເອນ 7:25). ອັກຄະສາວົກໂປໂລເອີ້ນອຳນາດດຽວກັນນີ້ວ່າ “ຄົນແຫ່ງການບາບ” ທີ່ຈະຍົກຕົນເອງຂຶ້ນເໜືອພຣະເຈົ້າ. (2 ເທສະໂລນີກ 2:3 TKJV). ຄຳພະຍາກອນທັງສອງນີ້ສົ່ງເສີມເຊິ່ງກັນແລະກັນ. ລະບອບສັນຕະປາປາສາມາດຍົກຕົນເອງຂຶ້ນເໜືອພຣະເຈົ້າໄດ້ ກໍດ້ວຍການປ່ຽນແປງພຣະບັນຍັດຂອງພຣະເຈົ້າເທົ່ານັ້ນ. ຜູ້ໃດທີ່ເຂົ້າໃຈແລ້ວ ແຕ່ຍັງຖືຮັກສາຕາມທີ່ລະບອບສັນຕະປາປາປ່ຽນແປງນັ້ນ ກໍເທົ່າກັບໄດ້ຖວາຍກຽດສູງສຸດແກ່ອຳນາດທີ່ປ່ຽນແປງພຣະບັນຍັດດັ່ງກ່າວ. ການກະທຳເຊັ່ນນີ້ ກໍເປັນເຄື່ອງໝາຍສະແດງຄວາມຈົງຮັກພັກດີຕໍ່ສັນຕະປາປາແທນພຣະເຈົ້າ. *{GC 446.1}*

ລະບອບສັນຕະປາປາໄດ້ພະຍາຍາມປ່ຽນແປງພຣະບັນຍັດຂອງພຣະເຈົ້າ. ພຣະບັນຍັດຂໍ້ທີສອງ ທີ່ຫ້າມການຂາບໄຫວ້ຮູບເຄົາລົບ ໄດ້ຖືກຕັດອອກຈາກພຣະບັນຍັດ ແລະ ພຣະບັນຍັດຂໍ້ທີສີ່ ກໍຖືກປ່ຽນແປງໃຫ້ຖືວັນທຳອິດເປັນວັນສະບາໂຕແທນວັນທີເຈັດ. ແຕ່ຝ່າຍກາໂຕລິກອ້າງວ່າ ທີ່ຕັດພຣະບັນຍັດຂໍ້ທີສອງອອກ ກໍເພາະບໍ່ຈຳເປັນ ໂດຍເວົ້າວ່າມັນລວມຢູ່ໃນຂໍ້ທີໜຶ່ງແລ້ວ, ພວກເຂົາພຽງແຕ່ຮັກສາພຣະບັນຍັດໄວ້ ຕາມພຣະປະສົງອັນແທ້ຈິງຂອງພຣະເຈົ້າ. ນີ້ຈຶ່ງບໍ່ແມ່ນການປ່ຽນແປງທີ່ຜູ້ເຜີຍພຣະທຳໄດ້ທຳນວາຍໄວ້. ຢ່າງໃດກໍຕາມ, ຜູ້ເຜີຍພຣະທຳກ່າວເຖິງການຕັ້ງໃຈປ່ຽນແປງດັ່ງກ່າວວ່າ: ເພິ່ນ “ຈະ*ຄິດ*ປ່ຽນວາລະ ແລະ ບົດບັນຍັດ.” (ດານີເອນ 7:25 TH1940). ການປ່ຽນແປງພຣະບັນຍັດຂໍ້ທີສີ່ ເປັນໄປຕາມຄຳພະຍາກອນນີ້ຢ່າງແທ້ຈິງທຸກປະການ. ພວກເຂົາອ້າງພຽງແຕ່ສິດອຳນາດຂອງຄຣິສຕະຈັກໃນການປ່ຽນແປງນີ້, ເຊິ່ງໃນເລື່ອງດັ່ງກ່າວ ລະບອບສັນຕະປາປາຍົກຕົນຂຶ້ນເໜືອພຣະເຈົ້າຢ່າງເປີດເຜີຍ. *{GC 446.2}*

ລັກສະນະພິເສດຂອງຜູ້ນະມັດສະການພຣະເຈົ້າໃນຍຸກສຸດທ້າຍ ແມ່ນການຖືຮັກສາພຣະບັນຍັດຂໍ້ທີສີ່ ເພາະມັນເປັນເຄື່ອງໝາຍແຫ່ງຣິດທານຸພາບຂອງພຣະອົງໃນການຊົງສ້າງ ແລະ ເປັນສິ່ງທີ່ຢືນຢັນວ່າ ພຣະອົງຊົງສົມຄວນຈະໄດ້ຮັບຄວາມຢຳເກງ ແລະ ການນະມັດສະການຈາກມະນຸດ. ສ່ວນຜູ້ນະມັດສະການສັດຮ້າຍ ຈະເປັນທີ່ຮູ້ຈັກຈາກຄວາມພະຍາຍາມທີ່ຈະທຳລາຍອະນຸສອນຂອງພຣະຜູ້ສ້າງ ເພື່ອຍົກຍ້ອງວັນທີ່ຄຣິສຕະຈັກໂຣມຕັ້ງຂຶ້ນ. ເລີ່ມຕົ້ນ ລະບອບສັນຕະປາປາໄດ້ອ້າງສິດອຳນາດຢ່າງຈອງຫອງ ໃນການສົ່ງເສີມການຖືວັນອາທິດ.[9] ການນຳໃຊ້ອຳນາດລັດຄັ້ງທຳອິດຂອງພວກເຂົາ ແມ່ນເພື່ອບັງຄັບການຖືວັນອາທິດໃນຖານະ ‘ວັນຂອງອົງພຣະຜູ້ເປັນເຈົ້າ.’ ແຕ່ພຣະຄຳພີຊີ້ໃຫ້ເຫັນວ່າ ວັນທີເຈັດເປັນວັນຂອງອົງພຣະຜູ້ເປັນເຈົ້າ ບໍ່ແມ່ນວັນທີໜຶ່ງ. ພຣະຄຣິສຊົງກ່າວວ່າ: “ບຸດມະນຸດຈຶ່ງເປັນອົງພຣະຜູ້ເປັນເຈົ້າຂອງວັນສະບາໂຕ.” ພຣະບັນຍັດຂໍ້ທີສີ່ກ່າວວ່າ: “ວັນທີເຈັດ ເປັນວັນສະບາໂຕຂອງພຣະເຈົ້າຢາເວ ພຣະເຈົ້າຂອງເຈົ້າ.” ນອກຈາກນັ້ນ, ອົງພຣະຜູ້ເປັນເຈົ້າຍັງໄດ້ເອີ້ນວັນນັ້ນຜ່ານຜູ້ເຜີຍພຣະທຳເອຊາຢາວ່າ: “ວັນສັກສິດຂອງພຣະເຈົ້າຢາເວ.” (ມາຣະໂກ 2:28 LCV; ອົບພະຍົບ 20:10; ເອຊາຢາ 58:13). *{GC 446.3}*

[9] ເອກະສານສຳຄັນກ່ຽວກັບການຮຽກຮ້ອງສິດອຳນາດສູງສຸດຂອງບັນດາເຈົ້າຄະນະແຫ່ງນະຄອນໂຣມ ສາມາດພົບໄດ້ໃນບົດຂຽນຂອງນັກວິຊາການທັງທີ່ເປັນກາໂຕລິກ ແລະ ໂປຣແຕັສຕັງ, ລວມທັງເອກະສານປອມແປງທີ່ເອີ້ນວ່າ “ການມອບຖວາຍຂອງຄອນສະຕັນຕິນ” ທີ່ຖືກນຳໃຊ້ເພື່ອສົ່ງເສີມແນວຄິດນີ້ໃນສະໄໝເລີ່ມຕົ້ນ.

ຄຳກ່າວອ້າງທີ່ມັກເວົ້າກັນວ່າ ພຣະຄຣິສຊົງປ່ຽນວັນສະບາໂຕນັ້ນ ໄດ້ຮັບການພິສູດວ່າບໍ່ເປັນຄວາມຈິງ ດ້ວຍພຣະຄຳຂອງພຣະອົງເອງ. ໃນຄຳເທດສະໜາເທິງພູ ພຣະອົງຊົງກ່າວວ່າ: “ຢ່າຄິດວ່າເຮົາມາເພື່ອລຶບລ້າງກົດບັນຍັດ ຫຼື ໜັງສືຜູ້ທຳນວາຍ; ເຮົາບໍ່ໄດ້ມາລຶບລ້າງກົດບັນຍັດ ແຕ່ມາເພື່ອເຮັດໃຫ້ກົດບັນຍັດນັ້ນສຳເລັດຄົບຖ້ວນ. ເພາະເຮົາບອກພວກເຈົ້າຕາມຄວາມຈິງວ່າ, ຕາບໃດທີ່ສະຫວັນ ແລະ ແຜ່ນດິນໂລກຍັງຕັ້ງຢູ່ ແມ່ນແຕ່ໂຕອັກສອນທີ່ນ້ອຍທີ່ສຸດໜຶ່ງ ຫຼື ຈຸດດຽວ ກໍຈະບໍ່ສູນຫາຍໄປຈາກໜັງສືກົດບັນຍັດ ຈົນກວ່າທຸກສິ່ງຈະສຳເລັດຄົບຖ້ວນ. ເຫດສະນັ້ນ, ຖ້າຜູ້ໃດບໍ່ເຊື່ອຟັງບັນດາຄຳສັ່ງຂໍ້ເລັກນ້ອຍທີ່ສຸດ ແລະ ສອນຄົນອື່ນໃຫ້ເຮັດຕາມ, ຜູ້ນັ້ນຈະຖືກເອີ້ນວ່າ ເປັນຜູ້ເລັກນ້ອຍທີ່ສຸດໃນອານາຈັກສະຫວັນ, ສ່ວນຜູ້ທີ່ປະຕິບັດຕາມກົດບັນຍັດ ແລະ ສັ່ງສອນຄົນອື່ນໃຫ້ປະຕິບັດຕາມຄຳສັ່ງເຫຼົ່ານີ້ ຈະຖືກເອີ້ນວ່າເປັນຜູ້ຍິ່ງໃຫຍ່ໃນອານາຈັກສະຫວັນ.” (ມັດທາຍ 5:17–19 LCV). *{GC 447.1}*

ສິ່ງທີ່ພຣະຄຳພີໃໝ່ບໍ່ໄດ້ສະໜັບສະໜູນ

ພວກໂປຣແຕັສຕັງໂດຍທົ່ວໄປຍອມຮັບວ່າ ພຣະຄຳພີບໍ່ໄດ້ໃຫ້ສິດອຳນາດໃນການປ່ຽນແປງວັນສະບາໂຕ. ເລື່ອງນີ້ໄດ້ຖືກກ່າວໄວ້ຢ່າງຈະແຈ້ງໃນສິ່ງຕີພິມຂອງ “ສະມາຄົມໃບປົວອາເມຣິກັນ” ແລະ “ສະຫະພັນໂຮງຮຽນວັນອາທິດອາເມຣິກັນ.” ໜຶ່ງໃນສິ່ງຕີພິມເຫຼົ່ານີ້ຍອມຮັບວ່າ “ພຣະຄຳພີໃໝ່ບໍ່ໄດ້ກ່າວເຖິງຄຳສັ່ງທີ່ຊັດເຈນ ກ່ຽວກັບວັນສະບາໂຕ [ວັນອາທິດ, ວັນທີໜຶ່ງຂອງອາທິດ] ຫຼື ກົດລະບຽບທີ່ແນ່ນອນສຳລັບການຖືຮັກສາວັນນັ້ນ.”[10] *{GC 447.2}*

ອີກສະບັບໜຶ່ງກ່າວວ່າ: “ຈົນເຖິງການສິ້ນພຣະຊົນຂອງພຣະຄຣິສ ບໍ່ມີການປ່ຽນແປງໃດ ໆ ກ່ຽວກັບວັນທີ່ຖືຮັກສາ;” ແລະ “ຕາມທີ່ບັນທຶກໄວ້, [ພວກອັກຄະສາວົກ] ບໍ່ໄດ້...ອອກຄຳສັ່ງຢ່າງຈະແຈ້ງ ໃຫ້ປະຖິ້ມວັນສະບາໂຕໃນວັນທີເຈັດ ແລະ ໃຫ້ຖືຮັກສາວັນທີໜຶ່ງຂອງອາທິດແທນ.”[11] *{GC 447.3}*

ຊາວກາໂຕລິກຍອມຮັບວ່າ ການປ່ຽນແປງວັນສະບາໂຕແມ່ນການກະທຳຂອງຄຣິສຕະຈັກຂອງພວກເຂົາ ແລະ ປະກາດວ່າ ເມື່ອພວກໂປຣແຕັສຕັງຖືວັນອາທິດ ພວກເຂົາກຳລັງຍອມຮັບອຳນາດຂອງກາໂຕລິກ. ໃນປຶ້ມ *ຄຳສອນຄຣິສຕະສາສະໜາຂອງກາໂຕລິກ* ມີຄຳຖາມວ່າ ຕາມພຣະບັນຍັດຂໍ້ທີສີ່ແມ່ນໃຫ້ຖືຮັກສາມື້ໃດ, ຄຳຕອບມີດັ່ງນີ້: “ໃນສະໄໝພຣະບັນຍັດເກົ່າ, ວັນເສົາເປັນວັນທີ່ຖືກຊຳລະໃຫ້ບໍຣິສຸດ, ແຕ່*ຄຣິສຕະຈັກ*ໄດ້ຮັບການສັ່ງສອນຈາກພຣະເຢຊູຄຣິສ ແລະ ການນຳພາໂດຍພຣະວິນຍານຂອງພຣະເຈົ້າ ຈຶ່ງຕັ້ງວັນອາທິດແທນວັນເສົາ; ດັ່ງນັ້ນ, ປັດຈຸບັນພວກເຮົາຈຶ່ງຖືວັນທີໜຶ່ງບໍ່ແມ່ນວັນທີເຈັດ; ວັນອາທິດຈຶ່ງກາຍເປັນວັນຂອງອົງພຣະຜູ້ເປັນເຈົ້າ.” *{GC 447.4}*

ບັນດານັກຂຽນຝ່າຍສັນຕະປາປາ ໄດ້ອ້າງເຖິງການປ່ຽນວັນສະບາໂຕເປັນວັນອາທິດ ວ່າເປັນເຄື່ອງ-ໝາຍສະແດງສິດອຳນາດຂອງຄຣິສຕະຈັກກາໂຕລິກ ເຊິ່ງພວກໂປຣແຕັສຕັງກໍຍອມຮັບ “ເພາະການຖືຮັກສາວັນອາທິດສະແດງວ່າ ພວກເຂົາຍອມຮັບສິດອຳນາດຂອງຄຣິສຕະຈັກ ໃນການກຳນົດວັນສະຫຼອງ ແລະ ສັ່ງໃຫ້ຖືຮັກສາໂດຍຖືວ່າ ການຝ່າຝືນເປັນຄວາມບາບ.”[12] ສະນັ້ນ, ການປ່ຽນແປງວັນສະບາໂຕຈຶ່ງບໍ່ແມ່ນສິ່ງອື່ນໃດ ນອກຈາກເຄື່ອງໝາຍ ຫຼື ສັນຍະລັກແຫ່ງສິດອຳນາດຂອງຄຣິສຕະຈັກໂຣມ ກໍຄື “ເຄື່ອງໝາຍຂອງສັດຮ້າຍ.” *{GC 448.1}*

---

[10] ຈອດຈ໌ ເອລຽດ (George Elliott), *The Abiding Sabbath*, ໜ້າ 184. (ວົງລຸ່ມຢູ່ໃນຕົ້ນສະບັບ).

[11] ເອ. ອີ. ວາເຟີນ (A. E. Waffle), *ວັນຂອງພຣະຜູ້ເປັນເຈົ້າ*, ໜ້າ 186–188. (ວົງລຸ່ມຢູ່ໃນຕົ້ນສະບັບ).

[12] ເຮັນຣີ ທູເບີວິນ (Henry Tuberville), *ຫຼັກຄຳສອນຂອງຄຣິສຕຽນໂດຍຫຍໍ້*, ໜ້າ 58.

ຄຣິສຕະຈັກໂຣມບໍ່ເຄີຍຍົກເລີກການອ້າງສິດອຳນາດສູງສຸດ. ເມື່ອຊາວໂລກ ແລະ ບັນດາຄຣິສ-ຕະຈັກໂປຣແຕັສຕັ້ງຍອມຮັບວັນທີ່ຄຣິສຕະຈັກໂຣມຕັ້ງຂຶ້ນ ໃນຂະນະທີ່ພວກເຂົາປະຕິເສດວັນສະບາໂຕ ຕາມພຣະຄຳພີ ກໍເທົ່າກັບເປັນການຍອມຮັບຂໍ້ອ້າງຂອງຄຣິສຕະຈັກໂຣມ. ຄຣິສຕະຈັກຝ່າຍໂປຣແຕັສຕັ້ງ ອາດອ້າງເຖິງຮີດຄອງປະເພນີ ແລະ ບັນດານັກຂຽນຄຣິສຕຽນໃນສະຕະວັດຕົ້ນ ໆ ເພື່ອສະໜັບສະໜຸນ ໃນການປ່ຽນແປງນີ້, ແຕ່ການເຮັດແນວນັ້ນ ກໍເປັນການລະເມີດຕໍ່ຫຼັກການທີ່ແຍກພວກເຂົາອອກຈາກ ໂຣມ: ກໍຄືຫຼັກການທີ່ວ່າ, 'ສາສະໜາໂປຣແຕັສຕັ້ງຢຶດຖືແຕ່ພຣະຄຳພີເທົ່ານັ້ນ.' ພວກທີ່ສະໜັບສະໜຸນ ສັນຕະປາປາເຫັນຢ່າງຈະແຈ້ງວ່າ ຝ່າຍໂປຣແຕັສຕັ້ງກຳລັງຫຼອກຕົວເອງໂດຍຕັ້ງໃຈປິດຕາໃສ່ຂໍ້ເທັດ ຈິງ. ເມື່ອຂະບວນການບັງຄັບໃຫ້ໃຊ້ກົດໝາຍຖືຮັກສາວັນອາທິດໄດ້ຮັບການສະໜັບສະໜຸນໃຫ້ເປັນທີ່ ນິຍົມຫຼາຍຂຶ້ນ, ພວກເຂົາກໍຈະພໍໃຈເພາະເຊື່ອໝັ້ນວ່າ ໃນທີ່ສຸດມັນຈະນຳສະມາຊິກນິກາຍໂປຣແຕັສຕັ້ງ ທັງໝົດທົ່ວໂລກໃຫ້ກັບຄືນມາຢູ່ພາຍໃຕ້ທຸງຂອງໂຣມ. *{GC 448.2}*

ສະມາຊິກຄຣິສຕະຈັກໂຣມປະກາດວ່າ "ການທີ່ພວກໂປຣແຕັສຕັ້ງຖືຮັກສາວັນອາທິດ ເປັນການໃຫ້ ກຽດຕໍ່ຄຣິສຕະຈັກ [ກາໂຕລິກ] ໂດຍບໍ່ຮູ້ຕົວ."[13] ເມື່ອຄຣິສຕະຈັກຝ່າຍໂປຣແຕັສຕັ້ງບັງຄັບໃຫ້ຖືຮັກສາ ວັນອາທິດ ກໍເທົ່າກັບເປັນການບັງຄັບໃຫ້ນະມັດສະການລະບອບສັນຕະປາປາ ກໍຄືສັດຮ້າຍນັ້ນເອງ. ຜູ້ ທີ່ເຂົ້າໃຈພຣະບັນຍັດຂໍ້ທີສີ່ດີແລ້ວ ແຕ່ຍັງເລືອກທີ່ຈະຖືວັນສະບາໂຕທຽມເທັດແທນວັນສະບາໂຕອັນ ແທ້ຈິງ ກໍເທົ່າກັບເປັນການຍອມຂຶ້ນຢູ່ກັບອຳນາດທີ່ຕັ້ງວັນນັ້ນຂຶ້ນມາ. ແຕ່ເມື່ອຄຣິສຕະຈັກໃຊ້ອຳນາດ ລັດບັງຄັບໃຫ້ປະຕິບັດຕາມຄຳສອນທາງສາສະໜາ ກໍເທົ່າກັບເປັນການສ້າງຮູບຈຳລອງຂອງສັດຮ້າຍຂຶ້ນ ມາ. ດັ່ງນັ້ນ, ການບັງຄັບໃຫ້ຖືວັນອາທິດໃນສະຫະລັດອາເມຣິກາ ຈະເປັນການບັງຄັບໃຫ້ນະມັດສະການ ສັດຮ້າຍ ແລະ ຮູບຈຳລອງຂອງມັນນັ້ນເອງ. *{GC 448.3}*

ຢ່າງໃດກໍຕາມ, ຄຣິສຕຽນໃນຍຸກກ່ອນ ໆ ໄດ້ຖືວັນອາທິດໂດຍເຂົ້າໃຈວ່າ ພວກເຂົາກຳລັງຖືຮັກສາວັນ ສະບາໂຕຕາມພຣະຄຳພີ. ໃນປັດຈຸບັນກໍຍັງມີຄຣິສຕຽນແທ້ໃນທຸກຄຣິສຕະຈັກ ແມ່ນແຕ່ໃນຄຣິສຕະຈັກ ໂຣມັນກາໂຕລິກ; ຄົນເຫຼົ່ານີ້ເຊື່ອດ້ວຍຄວາມຈິງໃຈວ່າ ວັນອາທິດແມ່ນວັນສະບາໂຕທີ່ພຣະເຈົ້າຊົງກຳນົດ ໄວ້. ພຣະເຈົ້າຊົງຍອມຮັບຄວາມຈິງໃຈ ແລະ ຄວາມສັດຊື່ຂອງພວກເຂົາທີ່ມີຕໍ່ພຣະອົງ. ແຕ່ເມື່ອມີ ກົດໝາຍບັງຄັບໃຫ້ຖືວັນອາທິດ ແລະ ຊາວໂລກໄດ້ຮັບຄວາມສະຫວ່າງກ່ຽວກັບໜ້າທີ່ໃນການຮັກສາ ວັນສະບາໂຕອັນແທ້ຈິງແລ້ວ, ຜູ້ໃດທີ່ລະເມີດພຣະບັນຍັດຂອງພຣະເຈົ້າ ເພື່ອໄປເຊື່ອຟັງຂໍ້ກຳນົດທີ່ມາ ຈາກຄຣິສຕະຈັກໂຣມ ກໍເທົ່າກັບໃຫ້ກຽດແກ່ລະບອບສັນຕະປາປາຫຼາຍກວ່າພຣະເຈົ້າ. ການກະທຳຢ່າງ ນີ້ສະແດງຄວາມຈົງຮັກພັກດີຕໍ່ຄຣິສຕະຈັກໂຣມ ແລະ ຕໍ່ອຳນາດທີ່ບັງຄັບໃຊ້ສິ່ງທີ່ຄຣິສຕະຈັກໂຣມຕັ້ງ ຂຶ້ນ. ນີ້ຄືການນະມັດສະການສັດຮ້າຍ ແລະ ຮູບຈຳລອງຂອງມັນ. ເມື່ອມະນຸດປະຕິເສດສິ່ງທີ່ພຣະເຈົ້າ ຊົງປະກາດວ່າເປັນເຄື່ອງໝາຍແຫ່ງສິດອຳນາດຂອງພຣະອົງ ແລ້ວໃຫ້ກຽດສິ່ງທີ່ຄຣິສຕະຈັກໂຣມເລືອກ ເປັນເຄື່ອງໝາຍແຫ່ງອຳນາດຂອງຕົນແທນ, ພວກເຂົາກໍໄດ້ຍອມຮັບເອົາເຄື່ອງໝາຍທີ່ສະແດງຄວາມ ຈົງຮັກພັກດີຕໍ່ຄຣິສຕະຈັກໂຣມ, ກ່າວຄື: "ເຄື່ອງໝາຍຂອງສັດຮ້າຍ" ນັ້ນເອງ. ແຕ່ຈະບໍ່ມີຜູ້ໃດໄດ້ຮັບ ເຄື່ອງໝາຍດັ່ງກ່າວ ຈົນກວ່າເລື່ອງນີ້ຈະຖືກປະກາດຢ່າງຈະແຈ້ງຕໍ່ປະຊາຊົນ ແລະ ພວກເຂົາຕ້ອງ ຕັດສິນໃຈເລືອກລະຫວ່າງພຣະບັນຍັດຂອງພຣະເຈົ້າ ແລະ ຄຳສັ່ງຂອງມະນຸດ. ຫຼັງຈາກນັ້ນ, ຜູ້ທີ່ຍັງ ສືບຕໍ່ລະເມີດພຣະບັນຍັດກໍຈະໄດ້ຮັບ "ເຄື່ອງໝາຍຂອງສັດຮ້າຍ." *{GC 449.1}*

[13] ມົງເຊັນເຍີ ເຊກູ (Mgr. Segur), *Plain Talk About the Protestantism of Today*, ໜ້າ 213. (ວົງລ່ຽມຢູ່ໃນຕົ້ນ ສະບັບ).

ຄຳເຕືອນຂອງທູດສະຫວັນອົງທີສາມ

ຄຳເຕືອນທີ່ໜ້າຢ້ານກົວທີ່ສຸດທີ່ເຄີຍມີມາເຖິງມະນຸດສະໂລກ ແມ່ນຢູ່ໃນຂ່າວຂອງທູດສະຫວັນອົງທີສາມ. ບາບທີ່ເຮັດໃຫ້ພຣະພິໂຣດຂອງພຣະເຈົ້າ ຖືກຖອກເທລົງມາ ໂດຍບໍ່ໄດ້ເຈືອປົນກັບຄວາມເມດຕານັ້ນ ຕ້ອງເປັນບາບທີ່ຮ້າຍແຮງ; ມະນຸດຈະບໍ່ຖືກປະໄວ້ໃຫ້ຢູ່ໃນຄວາມມືດກ່ຽວກັບເລື່ອງອັນສຳຄັນນີ້. ຄຳຕັກເຕືອນຕໍ່ຄວາມບາບນີ້ຈະຕ້ອງຖືກປະກາດໄປທົ່ວໂລກກ່ອນການພິພາກສາລົງໂທດຂອງພຣະເຈົ້າຈະມາເຖິງ ເພື່ອທຸກຄົນຈະໄດ້ຮູ້ເຫດຜົນຂອງການລົງໂທດນັ້ນ ແລະ ມີໂອກາດທີ່ຈະຫຼີກໜີຈາກມັນໄດ້. ຄຳພະຍາກອນກ່າວວ່າທູດສະຫວັນອົງທີໜຶ່ງຈະປະກາດຂ່າວຂອງຕົນແກ່ “ທຸກຊົນຊາດ, ທຸກຊົນເຜົ່າ, ທຸກພາສາ ແລະ ແກ່ທຸກໆຄົນ.” (ພຣະນິມິດ 14:6 LCV). ຄຳເຕືອນຂອງທູດສະຫວັນອົງທີສາມ ເຊິ່ງເປັນສ່ວນໜຶ່ງຂອງຂ່າວທູດສະຫວັນສາມອົງ ກໍຈະຕ້ອງໄດ້ຮັບການປະກາດໃຫ້ແຜ່ກວ້າງອອກໄປບໍ່ໜ້ອຍກວ່າອົງທີໜຶ່ງ. ໃນຄຳພະຍາກອນໄດ້ຂຽນໄວ້ວ່າ ຂ່າວນີ້ຈະຖືກປະກາດດ້ວຍສຽງອັນດັງ ໂດຍທູດສະຫວັນທີ່ບິນຢູ່ໃນທ້ອງຟ້າ ແລະ ຈະດຶງດູດຄວາມສົນໃຈຂອງຊາວໂລກທັງປວງ. *{GC 449.2}*

ປະເດັນນີ້ຈະແບ່ງແຍກວົງການຄຣິສຕຽນທົ່ວໂລກອອກເປັນສອງກຸ່ມໃຫຍ່: ກຸ່ມໜຶ່ງ, ແມ່ນຜູ້ທີ່ຮັກສາພຣະບັນຍັດຂອງພຣະເຈົ້າ ແລະ ຄວາມເຊື່ອໃນພຣະເຢຊູ; ແລະອີກກຸ່ມໜຶ່ງແມ່ນຜູ້ທີ່ບູຊາສັດຮ້າຍກັບຮູບຈຳລອງຂອງມັນ ແລະ ຮັບເອົາເຄື່ອງໝາຍຂອງມັນ. ເຖິງແມ່ນວ່າ ຄຣິສຕະຈັກ ແລະ ອຳນາດຝ່າຍປົກຄອງຈະຮ່ວມມືກັນບັງຄັບ “ຄົນທັງໝົດ ທັງນ້ອຍ ແລະ ໃຫຍ່, ທັງຮັ່ງມີ ແລະ ຍາກຈົນ, ທັງເສລີ ແລະ ຂ້ອຍຂ້າ” (ພຣະນິມິດ 13:16) ໃຫ້ຮັບເອົາ “ເຄື່ອງໝາຍຂອງສັດຮ້າຍ,” ແຕ່ໄພ່ພົນຂອງພຣະເຈົ້າຈະບໍ່ຍອມຮັບເອົາ. ຜູ້ເຜີຍພຣະທຳແຫ່ງເກາະປັດໂມໄດ້ເຫັນ “ບັນດາຜູ້ມີໄຊຊະນະເໜືອສັດຮ້າຍ ແລະ ຮູບຂອງມັນ ແລະ ເຄື່ອງໝາຍຂອງມັນ ແລະ ເລກປະຈຳຊື່ຂອງມັນ. ພວກເຂົາຢືນຢູ່ເທິງທະເລແກ້ວນັ້ນ ແລະ ຖືພິນທີ່ພຣະເຈົ້າໄດ້ມອບໃຫ້ພວກເຂົາ” ແລະ ຮ້ອງເພງຂອງໂມເຊ ແລະ ເພງຂອງພຣະເມສານ້ອຍ. (ພຣະນິມິດ 15:2, 3 ດັດແປງຈາກສະບັບ TKJV). *{GC 450.1}*

26

ວຽກງານປະຕິຮູບ

ການປະຕິຮູບວັນສະບາໂຕ

ພຣະເຈົ້າໄດ້ບອກລ່ວງໜ້າໃນຄຳພະຍາກອນຂອງເອຊາຢາ ເຖິງວຽກງານປະຕິຮູບເລື່ອງວັນສະບາໂຕ ທີ່ຈະສຳເລັດໃນຍຸກສຸດທ້າຍວ່າ: “ພຣະເຢໂຮວາຊົງກ່າວດັ່ງນີ້ວ່າ ‘ຈົ່ງຮັກສາຄວາມຍຸຕິທຳໄວ້ ແລະ ກະທຳຄວາມທ່ຽງທຳ ເພາະຄວາມລອດຂອງເຮົາໃກ້ຈະມາ ແລະ ຄວາມຊອບທຳຂອງເຮົາຈະເຜີຍ ອອກ.’” “ເຮົາຈະອວຍພອນພວກທີ່ຢຶດຖືວັນສະບາໂຕ ແລະ ຜູ້ທີ່ບໍ່ລະເມີດກົດຂອງວັນສະບາໂຕ. ເຮົາ ຈະອວຍພອນຜູ້ທີ່ບໍ່ເຮັດສິ່ງອັນຊົ່ວຊ້າໃດ ໆ.” “ບັນດາຊົນຕ່າງຊາດທີ່ຫັນເຂົ້າຫາພຣະຜູ້ເປັນເຈົ້າ ເພື່ອ ບົວລະບັດຮັບໃຊ້ພຣະອົງ ເພື່ອຮັກພຣະນາມຂອງພຣະຜູ້ເປັນເຈົ້າ ແລະ ເພື່ອເປັນບັນດາຜູ້ຮັບໃຊ້ຂອງ ພຣະອົງ, ທຸກຄົນທີ່ຮັກສາວັນສະບາໂຕ ແລະ ບໍ່ດູໝິ່ນວັນສະບາໂຕ ແລະ ເຄັ່ງຄັດເຮັດຕາມ ພັນທະສັນຍາຂອງເຮົາ, ເຮົາຈະນຳຄົນເຫຼົ່ານີ້ໄປຍັງພູເຂົາອັນບໍຣິສຸດຂອງເຮົາ ແລະ ໃຫ້ພວກເຂົາມີໃຈ ຍິນດີຢູ່ໃນຕຳນັກແຫ່ງການອະທິຖານຂອງເຮົາ.” (ເອຊາຢາ 56:1 ດັດແປງຈາກສະບັບ TKJV; 2; 6–7 ດັດແປງຈາກສະບັບ NTV). *{GC 451.1}*

ຄຳພະຍາກອນນີ້ກ່າວເຖິງຍຸກສະໄໝຫຼັງຈາກການສະເດັດມາຄັ້ງທຳອິດຂອງພຣະເຢຊູຄຣິສ ດັ່ງ ທີ່ເຫັນໃນຂໍ້ຄວາມທີ່ວ່າ: “ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ທີ່ນຳປະຊາຊົນອິດສະຣາເອນຂອງພຣະ-ອົງ ກັບຄືນມາແຕ່ການເປັນຊະເລີຍໃນຕ່າງຖິ່ນໄດ້ສັນຍາວ່າ ພຣະອົງຍັງຈະນຳປະຊາຊົນອື່ນ ໆ ມາຮ່ວມກັບພວກເຂົາ.” (ເອຊາຢາ 56:8). ນີ້ເປັນການທຳນວາຍເຖິງການເຕົ້າໂຮມຄົນຕ່າງຊາດເຂົ້າ ມາ ໂດຍຜ່ານຂ່າວປະເສີດ. ພຣະເຈົ້າຊົງສັນຍາວ່າ ຈະອວຍພອນແກ່ຜູ້ທີ່ຖືຮັກສາວັນສະບາໂຕໃນ ເວລານັ້ນ. ດ້ວຍເຫດນີ້, ໜ້າທີ່ໃນການຖືຮັກສາພຣະບັນຍັດຂໍ້ທີສີ່ ຈຶ່ງບໍ່ໄດ້ສິ້ນສຸດລົງຫຼັງຈາກການຄືງ ພຣະອົງທີ່ໄມ້ກາງແຂນ ແຕ່ໄດ້ສືບຕໍ່ຫຼັງຈາກການຄືນພຣະຊົນ ແລະ ການສະເດັດຂຶ້ນສູ່ສະຫວັນຂອງ ພຣະຄຣິສ ແລະ ຕໍ່ໄປອີກຈົນເຖິງເວລາທີ່ຜູ້ຮັບໃຊ້ຂອງພຣະອົງ ຈະປະກາດຂ່າວອັນໜ້າຍິນດີໄປທົ່ວທຸກ ປະເທດ. *{GC 451.2}*

ອົງພຣະຜູ້ເປັນເຈົ້າຊົງສັ່ງໄວ້ຜ່ານຜູ້ເຜີຍພຣະທຳເອຊາຢາອີກວ່າ: “ຈົ່ງມັດຄຳພະຍານເຂົ້າໄວ້ດ້ວຍກັນ ແລະ ປະທັບຕາບົດບັນຍັດໃນໝູ່ສາວົກຂອງເຮົາ.” (ເອຊາຢາ 8:16 ແປຈາກສະບັບ KJV). ຕາປະທັບ ຂອງພຣະບັນຍັດຂອງພຣະເຈົ້າຢູ່ໃນພຣະບັນຍັດຂໍ້ທີສີ່. ໃນບັນດາພຣະບັນຍັດສິບປະການ ມີແຕ່ຂໍ້ນີ້ ເທົ່ານັ້ນ ທີ່ສະແດງໃຫ້ເຫັນທັງພຣະນາມ ແລະ ຕຳແໜ່ງຂອງຜູ້ປະທານພຣະບັນຍັດ. ຂໍ້ນີ້ປະກາດ ວ່າ ພຣະອົງຊົງເປັນພຣະຜູ້ສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ ເຊິ່ງສະແດງໃຫ້ເຫັນວ່າ ພຣະອົງ ເທົ່ານັ້ນທີ່ສົມຄວນໄດ້ຮັບຄວາມຢຳເກງ ແລະ ການນະມັດສະການເໜືອສິ່ງອື່ນໃດທັງປວງ. ນອກຈາກ ພຣະບັນຍັດຂໍ້ນີ້ແລ້ວ, ບໍ່ມີຂໍ້ອື່ນໃດໃນພຣະບັນຍັດສິບປະການທີ່ສະແດງໃຫ້ເຫັນວ່າ ໃຜເປັນຜູ້ປະທານ ພຣະບັນຍັດເຫຼົ່ານີ້. ເມື່ອລະບອບສັນຕະປາປາໄດ້ປ່ຽນແປງວັນສະບາໂຕ ຕາປະທັບກໍຖືກເອົາອອກຈາກ

ພຣະບັນຍັດ. ພວກສາວົກຂອງພຣະເຢຊູໄດ້ຖືກຮຽກເອີ້ນໃຫ້ນຳຕາປະທັບນັ້ນກັບຄືນສູ່ສະພາບທີ່ຄວນຈະເປັນ ໂດຍເຊີດຊູວັນສະບາໂຕຕາມພຣະບັນຍັດຂໍ້ທີສີ່ໃນຖານະເປັນສິ່ງເຕືອນໃຈເຖິງພຣະຜູ້ສ້າງ ແລະ ເປັນເຄື່ອງໝາຍແຫ່ງສິດອຳນາດຂອງພຣະອົງ. {GC 452.1}

“ຈົ່ງຫາພຣະບັນຍັດກັບຄຳພະຍານແດ່ທ້ອນ.” ໃນຂະນະທີ່ມີຄຳສອນ ແລະ ທິດສະດີທີ່ຂັດແຍ້ງກັນຢ່າງຫຼວງຫຼາຍ, ພຣະບັນຍັດຂອງພຣະເຈົ້າເປັນກົດເກນອັນດຽວທີ່ບໍ່ຜິດພາດສຳລັບທົດສອບຄວາມຄິດເຫັນ, ຫຼັກຄຳສອນ ແລະ ທິດສະດີທັງປວງ. ຜູ້ເຜີຍພຣະທຳກ່າວວ່າ: “ຖ້າເຂົາບໍ່ເວົ້າຕາມຄວາມນີ້ ບໍ່ມີຮຸ່ງແຈ້ງສຳລັບພວກນັ້ນ.” (ເອຊາຢາ 8:20 ດັດແປງຈາກສະບັບລາວບູຮານ). {GC 452.2}

ພຣະຜູ້ເປັນເຈົ້າຊົງບັນຊາອີກວ່າ: “ຈົ່ງຮ້ອງດັງ ໆ ຈົນສຸດສຽງເຖີດ ຈົ່ງບອກປະຊາຊົນອິດສະຣາເອນຂອງເຮົາກ່ຽວກັບການບາບຂອງພວກເຂົາ.” ບໍ່ແມ່ນຊາວໂລກທີ່ຊົ່ວຮ້າຍ ແຕ່ແມ່ນຜູ້ທີ່ພຣະອົງຊົງເອີ້ນວ່າ “ປະຊາຊົນຂອງເຮົາ” ທີ່ຕ້ອງໄດ້ຮັບການເຕືອນກ່ຽວກັບການລະເມີດຂອງພວກເຂົາ. ພຣະອົງຊົງກ່າວຕໍ່ໄປວ່າ: “ພວກເຂົານະມັດສະການເຮົາທຸກວັນໂດຍອ້າງວ່າ ພວກຕົນຢາກຮູ້ສິ່ງທີ່ເຮົາຕ້ອງການໃຫ້ພວກເຂົາເຮັດ ແລະ ຢາກປະຕິບັດຕາມຂໍ້ກົດບັນຍັດຂອງເຮົາ. ພວກເຂົາບອກວ່າ ຕ້ອງການກົດບັນຍັດທີ່ທ່ຽງທຳ ແລະ ພວກເຂົາກໍມີຄວາມສຸກໃນການນະມັດສະການເຮົາ.” (ເອຊາຢາ 58:1–2). ຄຳພະຍາກອນນີ້ສະແດງໃຫ້ເຫັນຄົນກຸ່ມໜຶ່ງທີ່ຄິດວ່າຕົນຊອບທຳ ແລະ ເບິ່ງຄືວ່າມີຄວາມສົນໃຈຢ່າງຫຼວງຫຼາຍໃນການຮັບໃຊ້ພຣະເຈົ້າ. ແຕ່ຄຳຕຳໜິອັນໜັກແໜ້ນ ແລະ ຈີງຈັງຈາກພຣະເຈົ້າຜູ້ຊົງຮູ້ຈັກຈິດໃຈມະນຸດ ສະແດງໃຫ້ເຫັນວ່າພວກເຂົາກຳລັງຢຽບຢ້ຳພຣະບັນຍັດອັນສັກສິດຂອງພຣະອົງ. {GC 452.3}

ຜູ້ເຜີຍພຣະທຳໄດ້ຊີ້ໃຫ້ເຫັນຂໍ້ບັນຍັດທີ່ຖືກປະຖິ້ມນັ້ນວ່າ: “ປະຊາຊົນຂອງເຈົ້າຈະ . . . ຟື້ນຟູຮາກຖານສະໄໝເກົ່າກ່ອນ, ເຈົ້າຈະໄດ້ຖືກເອີ້ນວ່າ ຜູ້ສ້ອມແປງກຳແພງທີ່ເພພັງ, ຜູ້ສ້ອມແປງຖະໜົນຫົນທາງ ແລະ ບ້ານເຮືອນ. ຫາກເຈົ້າຢຸດຢຽບຢ້ຳວັນສະບາໂຕ, ບໍ່ເຮັດອັນໃດຕາມໃຈມັກໃນວັນບໍຣິສຸດຂອງເຮົາ, ຫາກເຈົ້າເອີ້ນວັນສະບາໂຕວ່າ ວັນແຫ່ງຄວາມຊື່ນຊົມຍິນດີ ແລະ ເອີ້ນວັນບໍຣິສຸດຂອງອົງພຣະຜູ້ເປັນເຈົ້າວ່າ ວັນອັນຊົງກຽດ, ຫາກເຈົ້າໃຫ້ກຽດວັນນີ້ ໂດຍບໍ່ເຮັດຕາມໃຈຊອບ, ບໍ່ເຮັດຕາມຄວາມພໍໃຈຂອງຕົນເອງ ຫຼື ເວົ້າເລື່ອງໄຮ້ສາລະ, ເມື່ອນັ້ນເຈົ້າຈະພົບຄວາມຊື່ນຊົມຍິນດີໃນອົງພຣະຜູ້ເປັນເຈົ້າ.” (ເອຊາຢາ 58:12–14 ດັດແປງຈາກສະບັບ TNCV). ຄຳພະຍາກອນນີ້ມີຄວາມໝາຍສຳລັບຍຸກສະໄໝຂອງພວກເຮົາ. ຮອຍເພພັງໃນພຣະບັນຍັດຂອງພຣະເຈົ້າເກີດຂຶ້ນ ເມື່ອວັນສະບາໂຕຖືກປ່ຽນແປງໂດຍອຳນາດຂອງຄຣິສຕະຈັກໂຣມ; ແຕ່ເຖິງເວລາແລ້ວທີ່ວັນສະບາໂຕຈະໄດ້ຮັບການຟື້ນຟູ. ຮອຍເພພັງນັ້ນຈະຕ້ອງໄດ້ຮັບການສ້ອມແປງ ແລະ ຮາກຖານຂອງຫຼາຍຊົ່ວອາຍຸຄົນຈະຕ້ອງຖືກສ້າງຂຶ້ນໃໝ່. {GC 452.4}

ວັນສະບາໂຕໄດ້ຮັບພຣະພອນຈາກພຣະຜູ້ສ້າງ ແລະ ຖືກຊົງແຍກໄວ້ເປັນວັນບໍຣິສຸດເພາະພຣະອົງຊົງພັກຜ່ອນໃນວັນນັ້ນ. ອາດາມໄດ້ຮັກສາວັນນີ້ ເມື່ອຢູ່ໃນສະພາບບໍຣິສຸດໃນສວນເອເດນ. ເມື່ອອາດາມຫຼົງເຮັດບາບ ແລະ ກັບໃຈໃໝ່ ເພິ່ນກໍຍັງຮັກສາວັນນີ້ຫຼັງຈາກຖືກຂັບໄລ່ອອກຈາກທີ່ຢູ່ອັນສຸກສະບາຍນັ້ນ. ບັນພະບຸລຸດແຫ່ງຄວາມເຊື່ອທຸກຄົນໄດ້ຮັກສາວັນນີ້ເຊັ່ນກັນ ນັບຕັ້ງແຕ່ອາເບັນ, ໂນອາຜູ້ຊອບທຳ, ອັບຣາຮາມ ແລະ ຢາໂຄບ. ເມື່ອໄພ່ພົນທີ່ພຣະເຈົ້າຊົງເລືອກນັ້ນເປັນຂ້າທາດຢູ່ໃນປະເທດເອຢິບ, ຫຼາຍຄົນໄດ້ສູນເສຍຄວາມຮູ້ກ່ຽວກັບພຣະບັນຍັດຂອງພຣະເຈົ້າ ຍ້ອນການໄຫວ້ພຣະທຽມທີ່ມີຢູ່ທົ່ວໄປ. ແຕ່ເມື່ອພຣະຜູ້ເປັນເຈົ້າຊົງນຳຊາວອິດສະຣາເອນອອກມາ, ພຣະອົງຊົງປະກາດພຣະບັນຍັດຂອງພຣະອົງດ້ວຍຣັດສະໝີພາບອັນຍິ່ງໃຫຍ່ຕໍ່ໜ້າຊຸມນຸມຊົນ ເພື່ອໃຫ້ພວກເຂົາຮູ້ຈັກພຣະປະສົງຂອງພຣະອົງ, ແລະເພື່ອໃຫ້ພວກເຂົາຢຳເກງ ແລະ ເຊື່ອຟັງພຣະອົງຕະຫຼອດໄປ. {GC 453.1}

ການຮັກສາວັນສະບາໂຕແທ້ບໍ່ເຄີຍຂາດຊ່ວງ

ນັບຕັ້ງແຕ່ມື້ນັ້ນຈົນເຖິງປັດຈຸບັນ ຄວາມຮູ້ກ່ຽວກັບພຣະບັນຍັດຂອງພຣະເຈົ້າໄດ້ຖືກຮັກສາໄວ້ໃນໂລກ ແລະ ມີຄົນຖືຮັກສາວັນສະບາໂຕຕາມພຣະບັນຍັດຂໍ້ທີສີ່. ເຖິງແມ່ນວ່າ “ຄົນແຫ່ງການບາບ” ໄດ້ຢຽບຢ້ຳ ວັນບໍຣິສຸດຂອງພຣະເຈົ້າກໍຕາມ, ແຕ່ໃນຊ່ວງທີ່ລະບອບສັນຕະປາປາມີອຳນາດສູງສຸດ ກໍຍັງມີຄົນໃຫ້ກຽດ ແກ່ວັນສະບາໂຕ. ຄົນສັດຊື່ເຫຼົ່ານີ້ຕ້ອງຫຼົບລີ້ຢູ່ໃນບ່ອນຕ່າງ ໆ. ນັບຕັ້ງແຕ່ຂະບວນການປະຕິຮູບຄັ້ງໃຫຍ່ ໃນສະຕະວັດທີ 16 ນັ້ນ, ມີຄົນໃນແຕ່ລະຊົ່ວອາຍຸທີ່ສືບຕໍ່ຮັກສາວັນສະບາໂຕ. ເຖິງແມ່ນວ່າ ສ່ວນຫຼາຍ ນັ້ນຈະຢູ່ທ່າມກາງການຖືກປະນາມ ແລະ ການຖືກກົດຂີ່ຂົ່ມເຫັງ, ແຕ່ມີຄົນຍືນຢັນເຖິງພຣະບັນຍັດ ຂອງພຣະເຈົ້າຢ່າງບໍ່ຂາດສາຍວ່າ, ພຣະບັນຍັດນັ້ນບໍ່ມີວັນສິ້ນສຸດ ແລະ ມະນຸດມີໜ້າທີ່ອັນສັກສິດໃນ ການຮັກສາວັນສະບາໂຕແຫ່ງການຊົງສ້າງ. *{GC 453.2}*

ຄວາມຈິງເຫຼົ່ານີ້ທີ່ກ່າວໄວ້ໃນພຣະນິມິດບົດທີ 14 ເຊິ່ງກ່ຽວຂ້ອງກັບ “ຂ່າວປະເສີດອັນນິຣັນດອນ” ຈະ ເປັນເຄື່ອງໝາຍບົ່ງບອກເຖິງຄຣິສຕະຈັກຂອງພຣະເຢຊູຄຣິສໃນເວລາທີ່ພຣະອົງສະເດັດມາ. ດ້ວຍວ່າ, ມີການປະກາດເຖິງຜົນຂອງຂ່າວທູດສະຫວັນສາມອົງວ່າ: “ນີ້ແຫຼະຄື . . . ຜູ້ທີ່ຮັກສາພຣະບັນຍັດຂອງ ພຣະເຈົ້າ ແລະ ຄວາມເຊື່ອຂອງພຣະເຢຊູໄວ້.” (ພຣະນິມິດ 14:12 TKJV). ຂ່າວນີ້ແມ່ນຂ່າວສຸດທ້າຍ ທີ່ຈະປະກາດກ່ອນການສະເດັດມາຂອງພຣະຜູ້ເປັນເຈົ້າ. ທັນທີຫຼັງຈາກການປະກາດນີ້ ຜູ້ເຜີຍພຣະທຳ ໄດ້ເຫັນບຸດມະນຸດສະເດັດມາດ້ວຍຣັດສະໝີພາບ ເພື່ອເກັບກ່ຽວຜົນສຸກແຫ່ງແຜ່ນດິນໂລກ. *{GC 453.3}*

ຜູ້ທີ່ໄດ້ຮັບຄວາມສະຫວ່າງກ່ຽວກັບສະຖານນະມັດສະການໃນສະຫວັນ ແລະ ພຣະບັນຍັດຂອງ ພຣະເຈົ້າທີ່ບໍ່ມີການປ່ຽນແປງ ກໍເຕັມໄປດ້ວຍຄວາມຊົມຊື່ນຍິນດີ ແລະ ຄວາມປະຫຼາດໃຈ. ຄົນ ເຫຼົ່ານີ້ເຫັນວ່າ ຄວາມຈິງທີ່ເປີດເຜີຍໃຫ້ພວກເຂົາເຂົ້າໃຈນັ້ນ ມີຄວາມງົດງາມ ແລະ ເປັນລະບົບ ລະບຽບທີ່ກົມກຽວກັນ. ພວກເຂົາປາຖະໜາຢາກໃຫ້ຄວາມສະຫວ່າງອັນລ້ຳຄ່ານີ້ ແຜ່ຂະຫຍາຍໄປຫາ ຄຣິສຕຽນທຸກຄົນ; ແລະໝັ້ນໃຈວ່າ ທຸກຄົນຈະຍອມຮັບດ້ວຍຄວາມຍິນດີ. ແຕ່ຫຼັກຄວາມຈິງທີ່ຈະເຮັດ ໃຫ້ພວກເຂົາຂັດແຍ້ງກັບຊາວໂລກນັ້ນ ບໍ່ເປັນທີ່ຍອມຮັບສຳລັບຫຼາຍຄົນທີ່ອ້າງວ່າ ຕົນເປັນຜູ້ຕິດຕາມ ພຣະຄຣິສ. ການປະຕິບັດຕາມພຣະບັນຍັດຂໍ້ທີສີ່ນັ້ນ ຮຽກຮ້ອງການເສຍສະຫຼະທີ່ຄົນສ່ວນຫຼາຍບໍ່ກ້າ ຮັບເອົາ. *{GC 454.1}*

ເມື່ອມີການນຳສະເໜີໜ້າທີ່ໃນການຮັກສາວັນສະບາໂຕ, ຫຼາຍຄົນໃຫ້ເຫດຜົນຈາກແນວຄິດຂອງ ຊາວໂລກ ໂດຍເວົ້າວ່າ: “ພວກເຮົາຖືວັນອາທິດມາຕະຫຼອດ, ປູ່ຍ່າຕາຍາຍກໍຖືວັນນີ້ແຕ່ໃດມາ. ນອກຈາກ ນັ້ນ, ຄົນດີມີສິນທຳຫຼາຍຄົນທີ່ຖືວັນອາທິດ ໄດ້ສິ້ນຊີວິດລົງຢ່າງມີຄວາມສຸກ; ຖ້າພວກເຂົາຖືກ ຕ້ອງ ພວກເຮົາກໍຖືກຕ້ອງເຊັ່ນກັນ. ການຖືວັນສະບາໂຕເປັນສິ່ງໃໝ່ທີ່ຈະເຮັດໃຫ້ພວກເຮົາຂັດແຍ້ງ ກັບຊາວໂລກ ແລະ ພວກເຮົາຈະບໍ່ສາມາດນຳພາພວກເຂົາໄດ້. ກຸ່ມນ້ອຍ ໆ ທີ່ຖືວັນທີເຈັດ ຈະ ສາມາດເຮັດຫຍັງໄດ້ ເມື່ອທຽບກັບມະນຸດທັງໂລກທີ່ຖືວັນອາທິດ?” ຊາວຢິວກໍພະຍາຍາມໃຊ້ຂໍ້ໂຕ້ແຍ້ງ ທີ່ຄ້າຍຄືກັນນີ້ ເພື່ອແກ້ຕົວທີ່ພວກເຂົາປະຕິເສດພຣະຄຣິສ. ພຣະເຈົ້າຊົງຍອມຮັບບັນພະບຸລຸດຂອງ ພວກເຂົາທີ່ຖວາຍເຄື່ອງບູຊາ; ສະນັ້ນ, ເປັນຫຍັງລູກຫຼານຈຶ່ງຈະບໍ່ພົບຄວາມລອດພົ້ນໄດ້ ດ້ວຍການ ປະຕິບັດແບບດຽວກັນ? ໃນສະໄໝຂອງລູເທີກໍບໍ່ຕ່າງກັນ; ຄົນທີ່ຢູ່ຝ່າຍລະບອບສັນຕະປາປາໃຫ້ເຫດຜົນ ວ່າ ຄຣິສຕຽນແທ້ໄດ້ຕາຍໄປໃນຂະນະທີ່ພວກເຂົານັບຖືແບບກາໂຕລິກ; ສະນັ້ນ, ຄຳສອນຂອງກາໂຕລິກ ຈຶ່ງພຽງພໍທີ່ຈະໄດ້ລອດພົ້ນ. ການໃຫ້ເຫດຜົນແບບນີ້ ເປັນອຸປະສັກອັນໃຫຍ່ຫຼວງຕໍ່ການພັດທະນາ ຄວາມເຊື່ອ ແລະ ການປະຕິບັດທາງສາສະໜາທັງປວງ. *{GC 454.2}*

ຫຼາຍຄົນໄດ້ອ້າງວ່າ ການຖືວັນອາທິດເປັນຫຼັກຄຳສອນ ແລະ ເປັນທຳນຽມທີ່ແຜ່ຫຼາຍໃນຄຣິສຕະຈັກ ມາເປັນເວລາຫຼາຍສະຕະວັດແລ້ວ. ແຕ່ມີຫຼັກຖານສະແດງໃຫ້ເຫັນວ່າ ວັນສະບາໂຕ ແລະ ການຖືຮັກສາ ວັນນັ້ນເກົ່າແກ່ ແລະ ແຜ່ຫຼາຍກວ່ານັ້ນ, ເພາະວ່າມີມາຕັ້ງແຕ່ການສ້າງໂລກ ແລະ ໄດ້ຮັບການຢັ້ງຢືນ ຈາກເຫຼົ່າທູດສະຫວັນ ແລະ ຈາກພຣະເຈົ້າ. ເມື່ອພຣະເຈົ້າຊົງວາງຮາກຖານຂອງແຜ່ນດິນໂລກ, ເມື່ອ ດາວຮຸ່ງຮ້ອງເພງນຳກັນ ແລະ ບັນດາບຸດຂອງພຣະເຈົ້າໂຮ່ຮ້ອງດ້ວຍຄວາມຊົມຊື່ນຍິນດີ, ວັນສະບາໂຕ ກໍຖືກສະຖາປະນາຂຶ້ນໃນເວລານັ້ນ, (ເບິ່ງ ໂຢບ 38:6, 7; ປະຖົມມະການ 2:1–3). ວັນສະບາໂຕ ຄວນໄດ້ຮັບຄວາມເຄົາລົບນັບຖືຈາກພວກເຮົາ ເພາະບໍ່ແມ່ນສິດອຳນາດ ຫຼື ທຳນຽມຂອງມະນຸດທີ່ ສະຖາປະນາມັນຂຶ້ນ; ມັນຖືກສະຖາປະນາຂຶ້ນໂດຍພຣະເຈົ້າອົງນິຣັນ ແລະ ຖືກບັນຊາໄວ້ດ້ວຍພຣະຄຳ ອັນເປັນນິຣັນດອນຂອງພຣະອົງ. {GC 454.3}

ເມື່ອມີການນຳເລື່ອງການປະຕິຮູບວັນສະບາໂຕມາສະເໜີຕໍ່ປະຊາຊົນ, ພວກສາສະໜາຈານທີ່ມີ ຊື່ສຽງໄດ້ປິດເປືອນພຣະຄຳຂອງພຣະເຈົ້າ ໂດຍຕີຄວາມໝາຍພຣະຄຳພີໃນແບບທີ່ຈະເຮັດໃຫ້ຄົນຢຸດ ການສອບຖາມ. ສ່ວນຄົນທີ່ບໍ່ໄດ້ຄົ້ນຄວ້າພຣະຄຳພີດ້ວຍຕົນເອງ ກໍພໍໃຈທີ່ຈະຍອມຮັບຂໍ້ສະຫຼຸບທີ່ເຂົ້າ ກັບຄວາມປາຖະໜາຂອງພວກເຂົາ. ຫຼາຍຄົນພະຍາຍາມລົ້ມລ້າງຄວາມຈິງດ້ວຍການໂຕ້ຖຽງ, ດ້ວຍ ເຫດຜົນທີ່ຫຼອກລວງ, ດ້ວຍທຳນຽມຂອງບັນດານັກຂຽນຄຣິສຕຽນຍຸກເລີ່ມຕົ້ນ ແລະ ດ້ວຍອຳນາດ ຂອງຄຣິສຕະຈັກ. ຜູ້ທີ່ປົກປ້ອງຄວາມຈິງຈຶ່ງຕ້ອງອ້າງອີງພຣະຄຳພີ ເພື່ອພິສູດຄວາມຖືກຕ້ອງຂອງ ພຣະບັນຍັດຂໍ້ທີສີ່. ຄົນທຳມະດາຜູ້ບໍ່ໄດ້ຮຽນສູງ ທີ່ມີພຽງແຕ່ພຣະຄຳແຫ່ງຄວາມຈິງເປັນອາວຸດ ໄດ້ ຕ້ານທານການໂຈມຕີຈາກບັນດາຜູ້ມີການສຶກສາສູງ. ພວກນັກວິຊາການເຫຼົ່ານີ້ຮູ້ສຶກປະຫຼາດໃຈ ແລະ ຄຽດແຄ້ນ ເມື່ອເຫັນວ່າຄຳເວົ້າອັນສະຫຼຽວສະຫຼາດທີ່ແຝງດ້ວຍການຫຼອກລວງຂອງຕົນບໍ່ໄດ້ຜົນ. ຄົນ ທຳມະດາທີ່ຮູ້ຈັກພຣະຄຳພີດີ ໃຊ້ເຫດຜົນກົ້ງໄປກົ້ງມາ ຈົນເອົາຊະນະທິດສະດີອັນສະຫຼັບຊັບຊ້ອນຂອງ ສະຖາບັນການສຶກສາ. {GC 455.1}

ເມື່ອບໍ່ມີຫຼັກຖານຈາກພຣະຄຳພີສະໜັບສະໜູນ ຫຼາຍຄົນກໍຍັງໂຕ້ແຍ້ງແບບບໍ່ຢຸດບໍ່ເຊົາ, ໂດຍ ລືມໄປວ່າມີການໃຊ້ເຫດຜົນດຽວກັນນີ້ເອງໃນການຕໍ່ຕ້ານພຣະຄຣິສ ແລະ ພວກອັກຄະສາວົກຂອງ ພຣະອົງ. ພວກເຂົາເວົ້າວ່າ: “ເປັນຫຍັງຜູ້ທີ່ມີການສຶກສາສູງຂອງພວກເຮົາ ຈຶ່ງບໍ່ເຂົ້າໃຈເລື່ອງວັນ ສະບາໂຕນີ້? ມີແຕ່ຄົນສ່ວນໜ້ອຍເທົ່ານັ້ນທີ່ເຊື່ອຄືກັບພວກເຈົ້າ. ເປັນໄປບໍ່ໄດ້ທີ່ພວກເຈົ້າຈະເປັນຝ່າຍ ຖືກ ແລະ ນັກວິຊາການທຸກຄົນໃນໂລກຈະເປັນຝ່າຍຜິດ.” {GC 455.2}

ມີພຽງແຕ່ການອ້າງເຖິງຄຳສອນໃນພຣະຄຳພີ ແລະ ປະຫວັດການປະຕິບັດຂອງພຣະເຈົ້າຕໍ່ໄພ່ພົນ ຂອງພຣະອົງໃນທຸກຍຸກທຸກສະໄໝເທົ່ານັ້ນ ທີ່ຈະຕອບໂຕ້ຂໍ້ໂຕ້ແຍ້ງດັ່ງກ່າວໄດ້. ພຣະເຈົ້າຊົງເຮັດວຽກ ຜ່ານຜູ້ທີ່ຟັງ ແລະ ປະຕິບັດຕາມສຽງຂອງພຣະອົງ ຄືຜູ້ທີ່ກ້າປະກາດຄວາມຈິງ ເຖິງແມ່ນວ່າຈະບໍ່ເປັນທີ່ ຍອມຮັບ, ແລະກ້າຕຳໜິຄວາມບາບອັນເປັນທີ່ນິຍົມຊົມຊອບຂອງຄົນໃນສັງຄົມ. ສາເຫດທີ່ພຣະອົງບໍ່ຄ່ອຍ ໄດ້ເລືອກຄົນມີການສຶກສາ ແລະ ຕຳແໜ່ງສູງເພື່ອນຳພາໃນຂະບວນການປະຕິຮູບ ກໍເພາະວ່າພວກເຂົາ ມັກທີ່ຈະໄວ້ໃຈໃນຫຼັກຂໍ້ເຊື່ອ, ທິດສະດີ ແລະ ລະບົບສາສະໜາສາດຂອງຕົນ ແລະ ບໍ່ຮູ້ສຶກຕ້ອງການ ໃຫ້ພຣະເຈົ້າສອນ. ມີແຕ່ຜູ້ທີ່ມີຄວາມສຳພັນສ່ວນຕົວກັບພຣະເຈົ້າຜູ້ຊົງໃຫ້ສະຕິປັນຍາເທົ່ານັ້ນ ທີ່ສາມາດ ເຂົ້າໃຈ ແລະ ອະທິບາຍພຣະຄຳພີໄດ້. ບາງຄັ້ງພຣະເຈົ້າຊົງເອີ້ນຄົນທີ່ມີການສຶກສາໜ້ອຍໃຫ້ປະກາດ ຄວາມຈິງ, ບໍ່ແມ່ນຍ້ອນພວກເຂົາບໍ່ມີການສຶກສາ, ແຕ່ຍ້ອນພວກເຂົາບໍ່ໄດ້ເພິ່ງຕົນເອງຫຼາຍເກີນໄປທີ່ຈະ ຮຽນຮູ້ຈາກພຣະອົງ. ພວກເຂົາຮຽນຮູ້ຈາກພຣະຄຣິສ ແລະ ຄວາມຖ່ອມຕົວກັບການເຊື່ອຟັງ ເຮັດໃຫ້ ພວກເຂົາຍິ່ງໃຫຍ່. ເມື່ອພຣະເຈົ້າມອບຄວາມຮູ້ເລື່ອງຄວາມຈິງຂອງພຣະອົງໃຫ້ພວກເຂົາ, ພຣະອົງໄດ້

ປະທານກຽດອັນສູງສົ່ງໃຫ້ພວກເຂົາ ເຊິ່ງເມື່ອທຽບກັນແລ້ວກຽດຕິຍົດ ແລະ ຄວາມຍິ່ງໃຫຍ່ຝ່າຍໂລກກໍ ກາຍເປັນສິ່ງບໍ່ສຳຄັນ. {GC 455.3}

ຊາວແອັດເວັນຕິສສ່ວນຫຼາຍ ໄດ້ປະຕິເສດຄວາມຈິງກ່ຽວກັບສະຖານນະມັດສະການ ແລະ ພຣະ-ບັນຍັດຂອງພຣະເຈົ້າ. ຫຼາຍຄົນໄດ້ປະຖິ້ມຄວາມເຊື່ອໃນການປະກາດເລື່ອງການສະເດັດມາຂອງພຣະ-ຄຣິສ. ພວກເຂົາໄດ້ຮັບເອົາແນວຄິດທີ່ບໍ່ສົມເຫດສົມຜົນ ແລະ ຂັດແຍ້ງກັນເອງກ່ຽວກັບຄຳພະຍາກອນທີ່ ກ່ຽວຂ້ອງກັບຂະບວນການນີ້. ບາງຄົນໄດ້ຫຼົງຜິດໂດຍການພະຍາຍາມຊ້ຳແລ້ວຊ້ຳອີກ ເພື່ອກຳນົດເວລາທີ່ ແນ່ນອນສຳລັບການສະເດັດມາຂອງພຣະຄຣິສ. ແສງສະຫວ່າງທີ່ເປີດເຜີຍເລື່ອງສະຖານນະມັດສະການ ທີ່ກະຈ່າງແຈ້ງໃນຕອນນັ້ນ ຄວນພິສູດໃຫ້ພວກເຂົາເຫັນສອງຢ່າງຄື: ໄລຍະເວລາຕ່າງ ໆ ທີ່ກຳນົດໄວ້ໃນ ຄຳພະຍາກອນ ລ້ວນແລ້ວແຕ່ສິ້ນສຸດລົງກ່ອນການສະເດັດມາຄັ້ງທີສອງ ແລະ ບໍ່ມີຂໍ້ພຣະຄຳພີໃດທີ່ ກຳນົດໄວ້ຢ່າງຖືກຕ້ອງແນ່ນອນວ່າ ພຣະອົງຈະສະເດັດມາໃນເວລາໃດ. ເຖິງຢ່າງໃດກໍຕາມ, ພວກເຂົາ ໄດ້ຫັນໜີຈາກແສງສະຫວ່າງ ແລະ ສືບຕໍ່ກຳນົດເວລາຊ້ຳແລ້ວຊ້ຳອີກ ສຳລັບການສະເດັດມາຂອງ ອົງພຣະຜູ້ເປັນເຈົ້າ ແຕ່ກໍຕ້ອງຜິດຫວັງທຸກຄັ້ງໄປ. {GC 456.1}

ເມື່ອຄຣິສຕະຈັກໃນເມືອງເທສະໂລນິກາໄດ້ຮັບຄຳສອນຜິດ ໆ ກ່ຽວກັບການສະເດັດມາຂອງພຣະຄຣິສ, ອາຈານໂປໂລໄດ້ແນະນຳໃຫ້ພວກເຂົາທົດສອບຄວາມຫວັງຂອງຕົນ ແລະ ສິ່ງທີ່ເຝົ້າລໍຄອຍຢ່າງຖີ່ຖ້ວນ ດ້ວຍພຣະຄຳຂອງພຣະເຈົ້າ. ເພິ່ນໄດ້ອ້າງເຖິງຄຳພະຍາກອນທີ່ເປີດເຜີຍເຫດການຕ່າງ ໆ ທີ່ຈະເກີດຂຶ້ນ ກ່ອນພຣະຄຣິສຈະສະເດັດມາ; ແລະໄດ້ຊີ້ໃຫ້ເຫັນວ່າ ພວກເຂົາບໍ່ມີເຫດຜົນທີ່ຈະຄາດຫວັງວ່າ ພຣະອົງ ຈະສະເດັດມາໃນຍຸກສະໄໝຂອງພວກເຂົາ. ອາຈານໂປໂລເຕືອນພວກເຂົາວ່າ: “ຢ່າໃຫ້ຜູ້ໃດມາຫຼອກລວງ ພວກເຈົ້າໃນທາງໃດທາງໜຶ່ງ.” (2 ເທສະໂລນິກ 2:3 LCV). ຖ້າຄົນເຫຼົ່ານັ້ນປ່ອຍຕົວໃຫ້ຄາດຫວັງໃນ ສິ່ງທີ່ບໍ່ມີການຮັບຮອງຈາກພຣະຄຳພີ, ພວກເຂົາຈະຖືກຊັກນຳໃຫ້ຫຼົງຜິດ. ຄວາມຜິດຫວັງຈະເຮັດໃຫ້ ພວກເຂົາຕົກເປັນເປົ້າຂອງການເຍາะເຍີ້ຍຈາກຜູ້ທີ່ບໍ່ເຊື່ອ ແລະ ພວກເຂົາຈະສ່ຽງຕໍ່ການຍອມແພ້ຕໍ່ຄວາມ ທໍ້ໃຈ, ສຸດທ້າຍກໍຈະຖືກທົດລອງ ໃຫ້ສົງໄສຄວາມຈິງທີ່ສຳຄັນຕໍ່ຄວາມລອດພົ້ນຂອງພວກເຂົາ. ຄຳ ເຕືອນຂອງອາຈານໂປໂລເຖິງຄຣິສຕຽນໃນເມືອງເທສະໂລນິກາ ມີບົດຮຽນອັນສຳຄັນສຳລັບຜູ້ທີ່ມີຊີວິດຢູ່ໃນ ຍຸກສຸດທ້າຍ. ຫຼາຍຄົນໃນກຸ່ມແອັດເວັນຕິສຮູ້ສຶກວ່າ ຖ້າບໍ່ສາມາດຢຶດເວລາທີ່ແນ່ນອນສຳລັບການສະເດັດ ມາຂອງພຣະເຢຊູດ້ວຍຄວາມເຊື່ອ, ພວກເຂົາກໍຈະບໍ່ສາມາດມີຄວາມກະຕືລືລົ້ນ ແລະ ຄວາມພາກພຽນ ໃນການກຽມພ້ອມເພື່ອຮັບການສະເດັດກັບມາ. ຢ່າງໃດກໍຕາມ, ເມື່ອມີສິ່ງມາກະຕຸ້ນຄວາມຫວັງຂອງ ພວກເຂົາຊ້ຳແລ້ວຊ້ຳອີກ ແຕ່ຕ້ອງຜິດຫວັງໃນທຸກຄັ້ງ, ຄວາມເຊື່ອຂອງພວກເຂົາໄດ້ຮັບການກະທົບ ຢ່າງຮຸນແຮງ ຈົນເຮັດໃຫ້ພວກເຂົາເກືອບບໍ່ສາມາດຮັບຮູ້ເຖິງຄວາມຈິງອັນຍິ່ງໃຫຍ່ຂອງຄຳພະຍາກອນ ໄດ້. {GC 456.2}

ໃນການປະກາດຂ່າວປະເສີດສະໜັ ອັນອົງທຳອິດ ມີການເທດສະໜາເລື່ອງເວລາທີ່ແນ່ນອນສຳລັບການ ພິພາກສາ; ສິ່ງນີ້ເປັນໄປຕາມການຊົງນຳຂອງພຣະເຈົ້າ. ການຄິດໄລ່ໄລຍະເວລາຕາມຄຳພະຍາກອນທີ່ ເປັນພື້ນຖານຂອງຂ່າວສານນີ້ ໄດ້ຮັບການຢືນຢັນໂດຍບໍ່ເຄີຍມີໃຜລົບລ້າງໄດ້. ຜົນຂອງການຄິດໄລ່ນັ້ນຊີ້ໃຫ້ ເຫັນວ່າ 2,300 ວັນຂອງຄຳພະຍາກອນໄດ້ສິ້ນສຸດລົງໃນລະດູໃບໄມ້ຫຼົ່ນຂອງປີ 1844. ແຕ່ການພະຍາຍາມ ຫາເວລາໃໝ່ເພື່ອເປັນຈຸດເລີ່ມຕົ້ນ ແລະ ຈຸດສິ້ນສຸດຂອງໄລຍະເວລາໃນຄຳພະຍາກອນ ພ້ອມທັງເຫດຜົນ ທີ່ບໍ່ໜັກແໜ້ນທີ່ມັກກ່າວອ້າງ ເພື່ອສະໜັບສະໜູນຈຸດຢືນນີ້ ບໍ່ພຽງແຕ່ເຮັດໃຫ້ຄົນຫ່າງໄກຈາກຄວາມ ຈິງອັນສຳຄັນສຳລັບຍຸກປັດຈຸບັນ ແຕ່ຍັງສ້າງຄວາມກຽດຊັງຕໍ່ການອະທິບາຍຄຳພະຍາກອນທັງປວງອີກ ດ້ວຍ. ຍິ່ງມີການກຳນົດວັນເວລາທີ່ແນ່ນອນສຳລັບການສະເດັດມາຄັ້ງທີສອງເລື້ອຍ ໆ ແລະ ຍິ່ງມີການ

ເຜີຍແຜ່ກວ້າງຂວາງເທົ່າໃດ ກໍຍິ່ງເປັນປະໂຫຍດຕໍ່ເປົ້າໝາຍຂອງຊາຕານຫຼາຍເທົ່ານັ້ນ. ເມື່ອເວລານັ້ນຜ່ານໄປ ຊາຕານໄດ້ຍົວະໃຫ້ເກີດການເຍາะเย้ย ແລະ ການປະນາມຜູ້ປະກາດຂ່າວສານ, ເຮັດໃຫ້ຄົນດູໝິ່ນຂະບວນການປະກາດເລື່ອງການສະເດັດມາໃນປີ 1843 ແລະ 1844. ສ່ວນຜູ້ທີ່ຢຶດຕິດກັບຄວາມຜິດນີ້ ສຸດທ້າຍກໍຈະກຳນົດວັນເວລາທີ່ໄກເກີນໄປສຳລັບການສະເດັດມາຂອງພຣະອົງ. ດ້ວຍເຫດນີ້, ພວກເຂົາຈະຮູ້ສຶກປອດໄພໃນຂະນະທີ່ຕົນຕົກຢູ່ໃນອັນຕະລາຍ ແລະ ຫຼາຍຄົນຈະບໍ່ຮູ້ຕົວຈົນກວ່າຈະສວາຍເກີນໄປ. *{GC 457.1}*

ປະຫວັດສາດຂອງຊາວອິດສະຣາເອນໃນສະໄໝບູຮານ ເປັນຕົວຢ່າງທີ່ຈະແຈ້ງເຖິງປະສົບການຂອງກຸ່ມແອັດເວັນຕິສ. ພຣະເຈົ້າຊົງນຳພາໄພ່ພົນຂອງພຣະອົງໃນຂະບວນການປະກາດການສະເດັດມາເຊັ່ນດຽວກັນກັບທີ່ພຣະອົງຊົງນຳພາຊາວອິດສະຣາເອນອອກຈາກປະເທດເອຢິບ. ໃນຄວາມຜິດຫວັງຄັ້ງໃຫຍ່ນັ້ນ ຄວາມເຊື່ອຂອງພວກເຂົາໄດ້ຖືກທົດສອບເໝືອນກັບທີ່ຊາວເຮັບເຣີໄດ້ຖືກທົດສອບທີ່ທະເລແດງ. ຖ້າພວກເຂົາຍັງຄົງໄວ້ວາງໃຈໃນພຣະຫັດຂອງພຣະເຈົ້າ ເຊິ່ງນຳພາພວກເຂົາໃນປະສົບການທີ່ຜ່ານມາ ພວກເຂົາຈະໄດ້ເຫັນຄວາມລອດທີ່ມາຈາກພຣະອົງ. ຖ້າທຸກຄົນທີ່ເຄີຍເຮັດວຽກຮ່ວມກັນໃນປີ 1844 ໄດ້ຮັບເອົາຂ່າວສານຂອງທູດສະຫວັນອົງທີສາມ ແລະ ໄດ້ປະກາດດ້ວຍຣິດອຳນາດຂອງພຣະວິນຍານບໍຣິສຸດ ພຣະເຈົ້າຄົງໄດ້ສະໜັບສະໜູນຄວາມພະຍາຍາມຂອງພວກເຂົາດ້ວຍພະລັງຣິດເດດ. ແສງສະຫວ່າງອັນຍິ່ງໃຫຍ່ຄົງໄດ້ສ່ອງໄປທົ່ວໂລກ, ຊາວໂລກທັງປວງຄົງໄດ້ຮັບການເຕືອນແລ້ວເປັນເວລາຫຼາຍປີ, ວຽກງານສຸດທ້າຍຄົງໄດ້ສຳເລັດຈົບສິ້ນ ແລະ ພຣະຄຣິສຄົງໄດ້ສະເດັດມາເພື່ອຮັບເອົາໄພ່ພົນຂອງພຣະອົງ. *{GC 457.2}*

ຄວາມເຊື່ອ ແລະ ຄວາມກ້າຫານ

ບໍ່ແມ່ນພຣະປະສົງຂອງພຣະເຈົ້າທີ່ຈະໃຫ້ຊົນຊາດອິດສະຣາເອນ ຕ້ອງທ່ອງທ່ຽວໄປມາໃນຖິ່ນແຫ້ງແລ້ງກັນດານເປັນເວລາ 40 ປີ. ພຣະອົງມີພຣະປະສົງທີ່ຈະນຳພາພວກເຂົາໄປສູ່ແຜ່ນດິນການາອານໂດຍກົງ ແລະ ສ້າງຕັ້ງພວກເຂົາຂຶ້ນທີ່ນັ້ນ ໃຫ້ເປັນຊົນຊາດທີ່ບໍຣິສຸດ ແລະ ມີຄວາມສຸກ. ແຕ່ “ພວກເຂົາເຫຼົ່ານັ້ນບໍ່ສາມາດເຂົ້າໄປກໍເພາะพวกเขาบໍ່ເຊື່ອ.” (ເຮັບເຣີ 3:19 LCV). ຍ້ອນການປະຖິ້ມທາງຂອງພຣະເຈົ້າ ແລະ ການປະຖິ້ມຄວາມເຊື່ອຂອງพวกเขา, ພວກເຂົາຈຶ່ງພິນาดໃນຖິ່ນກັນດານ; ພຣະເຈົ້າຊົງເລືອກຄົນລຸ້ນໃໝ່ ເພື່ອເຂົ້າໄປໃນแผ่นดินแห่งพระสัญญา. ໃນທຳນองดຽวกัน, ບໍ່ແມ່ນพระประสงค์ของพระเจ้าที่จะให้การสะเด็ดมาของพระคริสต์ต้องชักช้าไปดินปานนี้ ແລະ ໃຫ້ໄພ່ພົນຂອງพระองค์ต้องดำลงชีวิดในโลกที่เต็มไปด้วยความบาบ ແລະ ความทุกโสกเป็นเวลาดินนาน. แต่ความบໍ่เชื่อได้เร็ดให้พวกเขาห่างเหินจากพระเจ้า. เมื่อพวกเขาปะติเสดที่จะเร็ดวุงกานที่พระองค์มอบหมายให้, พระเจ้าชงเลือกคนอื่นเพื่อนำข่าวสานออกไปประกาด. พระเยซูชงเมดตาชาวโลก, พระองค์จึงชักช้าในการสะเด็ดกับมา เพื่อคนบาบจะได้มีโอกาดได้ยินคำตักเตือน ແລะ พบที่ลี้ไพในพระองค์ ก่อนพระพิโรดของพระเจ้าจะถูกถอกเทลงมา. *{GC 458.1}*

ສະໄໝນີ້ບໍ່ຕ່າງກັນกับสะไหมก่อน, เมื่อมีการประกาดความจิง เชิงตักเตือนผู้คนเถิงเลื่องความผิดบาบที่คนนิยมเร็ดในปัดจุบัน กำจะก่อให้เกิดการต่อต้าน. “ทุกคนที่เร็ดชั่วกำงุดชัง ความสะหว่าง ແລะ จะบໍ่เข้ามาในความสะหว่าง เพาะย้านว่าการกะทำของตนจะถูกเปิดเผย.” (โยฮัน 3:20 LCV). เมื่อผู้คนเห็นว่า พวกเขาบໍ่สามาดอ้างอิงพระคำพี เพื่อสะหนับสะหนุนจุดยืนของตน, หลายคนจึงตัดสินใจรักสาจุดยืนนั้นไว้ทุกวิทีทาง. พวกเขา

ມີຄວາມເຈດຕະນາຮ້າຍ ຈົ່ງປ້າຍສີອຸປະນິໄສ ແລະ ແຮງຈູງໃຈຂອງຜູ້ທີ່ປົກປ້ອງຄວາມຈິງ ອັນ ບໍ່ເປັນທີ່ນິຍົມຂອງສັງຄົມ. ນີ້ແມ່ນວິທີການດຽວກັນທີ່ຜູ້ຕໍ່ຕ້ານຄວາມຈິງ ໄດ້ເຮັດມາຕະຫຼອດທຸກ ຍຸກສະໄໝ. ເອລີຢາຖືກກ່າວຫາວ່າ ເປັນຜູ້ສ້າງຄວາມວຸ້ນວາຍໃນອິດສະຣາເອນ, ເຢເຣມີຢາຖືກກ່າວຫາ ວ່າ ເປັນຄົນທໍລະຍົດຕໍ່ຊາດ ແລະ ອາຈານໂປໂລຖືກກ່າວຫາວ່າ ເປັນຜູ້ເຮັດໃຫ້ພຣະວິຫານເປັນ ມົນທິນ. ຕັ້ງແຕ່ນັ້ນມາຈົນເຖິງທຸກມື້ນີ້, ຜູ້ທີ່ສັດຊື່ຕໍ່ຄວາມຈິງກໍຖືກກ່າວຫາວ່າເປັນກະບົດ, ເປັນຄົນ ນອກຮີດ ຫຼື ເປັນຄົນທີ່ສ້າງຄວາມແຕກແຍກ. ຝູງຊົນທີ່ບໍ່ເຊື່ອ ແລະ ບໍ່ຍອມຮັບຄຳພະຍານອນ ອັນແນ່ນອນ ຈະເຊື່ອຄຳກ່າວຫາຕໍ່ຜູ້ທີ່ກ້າຕີຕຽນຄວາມບາບອັນເປັນທີ່ນິຍົມ ໂດຍບໍ່ທັກທ້ວງ ຫຼື ມີ ຄຳຖາມແຕ່ຢ່າງໃດ; ນິໄສແບບນີ້ຈະເພີ່ມຂຶ້ນເລື້ອຍໆ. ພຣະຄຳພີສອນຢ່າງແຈ່ມແຈ້ງວ່າ ເວລາທີ່ ກົດໝາຍບ້ານເມືອງຈະຂັດແຍ້ງກັບພຣະບັນຍັດຂອງພຣະເຈົ້າໃກ້ເຂົ້າມາ. ໃນເວລານັ້ນ, ຜູ້ທີ່ຈະເຊື່ອຟັງ ພຣະບັນຍັດທັງໝົດ ຈະຕ້ອງກ້າຫານພໍທີ່ຈະຮັບການຖືກປະນາມ ແລະ ການລົງໂທດເໝືອນເປັນ ຄົນຊົ່ວຮ້າຍ. *{GC 458.2}*

ເມື່ອພິຈາລະນາເຖິງສິ່ງເຫຼົ່ານີ້ແລ້ວ, ຜູ້ປະກາດຄວາມຈິງມີໜ້າທີ່ແນວໃດ? ຄວນຫຼືບໍ່ ທີ່ລາວ ຈະຕັດສິນໃຈບໍ່ປະກາດຄວາມຈິງຍ້ອນວ່າມັນພຽງແຕ່ເຮັດໃຫ້ຄົນຫຼົບຫຼີກ ຫຼື ຕໍ່ຕ້ານເທົ່ານັ້ນ? ບໍ່ ເລີຍ. ການທີ່ຄຳປະກາດນັ້ນກະຕຸ້ນໃຫ້ເກີດການຕໍ່ຕ້ານ ບໍ່ແມ່ນເຫດຜົນພຽງພໍທີ່ຈະປິດບັງພຣະຄຳຂອງ ພຣະເຈົ້າ ເຊັ່ນດຽວກັນກັບບັກປະຕິຮູບໃນອະດີດ ທີ່ບໍ່ໄດ້ຢຸດການປະກາດຍ້ອນມີກະແສຕໍ່ຕ້ານ. ການ ປະກາດຄວາມເຊື່ອຂອງບັນດາຜູ້ບໍຣິສຸດ ແລະ ຜູ້ສະຫຼະຊີວິດເພື່ອຄວາມເຊື່ອນັ້ນ ໄດ້ຖືກບັນທຶກ ໄວ້ເພື່ອເປັນປະໂຫຍດແກ່ຄົນລຸ້ນຕໍ່ມາ. ແບບຢ່າງຂອງຊີວິດທີ່ບໍຣິສຸດ ແລະ ມີຄວາມສັດຊື່ໝັ້ນຄົງ ນັ້ນໄດ້ສືບທອດມາຈົນເຖິງປັດຈຸບັນ ເພື່ອເສີມສ້າງຄວາມກ້າຫານໃຫ້ແກ່ຜູ້ທີ່ຖືກເອີ້ນໃຫ້ເປັນພະຍານ ເພື່ອພຣະເຈົ້າ. ພວກເຂົາໄດ້ຮັບພຣະຄຸນ ແລະ ຄວາມຈິງບໍ່ແມ່ນສຳລັບຕົນເອງເທົ່ານັ້ນ ແຕ່ເພື່ອໃຫ້ ຄວາມຮູ້ເລື່ອງພຣະເຈົ້າສ່ອງແສງໄປຍັງຊາວໂລກທັງປວງຜ່ານທາງພວກເຂົາ. ພຣະເຈົ້າໄດ້ປະທານຄວາມ ສະຫວ່າງໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງໃນຍຸກນີ້ບໍ? ຖ້າເປັນເຊັ່ນນັ້ນ, ພວກເຂົາຄວນນຳເອົາແສງສະຫວ່າງ ນັ້ນໄປສ່ອງໃຫ້ແກ່ຊາວໂລກ. *{GC 459.1}*

ໃນ ສະໄໝ ບູຮານ, ພຣະຜູ້ເປັນເຈົ້າ ຊົງ ກ່າວ ກັບ ຜູ້ ໜຶ່ງ ທີ່ ປະກາດ ໃນ ພຣະນາມ ຂອງ ພຣະອົງ ວ່າ: “ຄອບຄົວອິດສະຣາເອນຈະບໍ່ມີນ້ຳໃຈຟັງເຈົ້າ ເຫດວ່າໃນພວກນັ້ນບໍ່ມີຜູ້ໃດມີນ້ຳໃຈຟັງເຮົາ.” ເຖິງ ຢ່າງນັ້ນ, ພຣະອົງຊົງກ່າວວ່າ: “ເຖິງແມ່ນວ່າພວກເຂົາຈະຟັງເຈົ້າຫຼືບໍ່ກໍຕາມ ເຈົ້າຈະຕ້ອງບອກສິ່ງທີ່ ເຮົາບອກເຈົ້າໃຫ້ກ່າວ.” (ເອເຊກຽນ 3:7 ສະບັບລາວບູຮານ; 2:7). ພຣະເຈົ້າຊົງບັນຊາແກ່ຜູ້ຮັບໃຊ້ ຂອງພຣະອົງໃນປັດຈຸບັນນີ້ວ່າ: “ຈົ່ງຮ້ອງດັງໆ ຈົນສຸດສຽງເຖີດ ຈົ່ງບອກປະຊາຊົນອິດສະຣາເອນຂອງ ເຮົາກ່ຽວກັບການບາບຂອງພວກເຂົາ.” (ເອຊາຢາ 58:1). *{GC 459.2}*

ເທົ່າທີ່ມີໂອກາດ ທຸກຄົນທີ່ໄດ້ຮັບຄວາມສະຫວ່າງແຫ່ງຄວາມຈິງກໍມີຄວາມຮັບຜິດຊອບທີ່ຄວນ ປະຕິບັດຢ່າງຈິງຈັງ ແລະ ດ້ວຍຄວາມຢຳເກງ, ເຊັ່ນດຽວກັນກັບຜູ້ເຜີຍພຣະທຳຂອງອິດສະຣາເອນ ຜູ້ ທີ່ໄດ້ຮັບພຣະຄຳຂອງພຣະຜູ້ເປັນເຈົ້າທີ່ກ່າວວ່າ: “ບັດນີ້ມະນຸດເອີຍ ເຮົາແຕ່ງຕັ້ງເຈົ້າໃຫ້ເປັນຜູ້ເຝົ້າ ຍາມຊົນຊາດອິດສະຣາເອນ. ເຈົ້າຕ້ອງນຳຄຳຕັກເຕືອນທີ່ເຮົາໄດ້ມອບໃຫ້ເຈົ້ານັ້ນໄປບອກພວກເຂົາ. ຖ້າ ເຮົາປະກາດວ່າ ຄົນຊົ່ວຜູ້ໜຶ່ງກຳລັງຈະຕາຍ ແຕ່ເຈົ້າບໍ່ໄດ້ຕັກເຕືອນລາວໃຫ້ປ່ຽນທິດທາງ ເພື່ອຊ່ວຍ ຊີວິດຂອງຕົນໄວ້; ແລ້ວລາວກໍຈະຕາຍເສຍ ທັງໆທີ່ຍັງເປັນຄົນບາບຢູ່; ເຮົາຈະຖືວ່າການຕາຍ ຂອງຄົນນັ້ນ ເປັນຄວາມຮັບຜິດຊອບຂອງເຈົ້າ. ຖ້າເຈົ້າຕັກເຕືອນຄົນຊົ່ວຜູ້ໜຶ່ງ ແລະ ລາວບໍ່ເຊົາ

ເຮັດບາບ ລາວກໍຈະຕາຍ ທັງໆທີ່ລາວຍັງເປັນຄົນບາບຢູ່, ແຕ່ເຈົ້າເອງຈະລອດຊີວິດ.” (ເອເຊກຽນ 33:7–9). *{GC 459.3}*

ອຸປະສັກໃຫຍ່ທີ່ສຸດໃນການຍອມຮັບ ແລະ ການເຜີຍແຜ່ຄວາມຈິງ ແມ່ນການທີ່ມັນນຳໄປສູ່ຄວາມລຳບາກ ແລະ ການຖືກດູໝິ່ນ. ນີ້ເປັນຂໍ້ໂຕ້ແຍ້ງຕໍ່ຄວາມຈິງພຽງຢ່າງດຽວ ທີ່ຜູ້ສະໜັບສະໜຸນບໍ່ເຄີຍສາມາດປະຕິເສດໄດ້. ແຕ່ສິ່ງນີ້ບໍ່ໄດ້ເປັນອຸປະສັກຕໍ່ຜູ້ຕິດຕາມທີ່ແທ້ຈິງຂອງພຣະຄຣິສ. ພວກເຂົາບໍ່ໄດ້ລໍຖ້າໃຫ້ຄວາມຈິງເປັນທີ່ນິຍົມ; ເມື່ອໝັ້ນໃຈໃນໜ້າທີ່ຂອງຕົນ, ພວກເຂົາຍິນດີຍອມຮັບໄມ້ກາງແຂນ, ຄືກັນກັບອັກຄະສາວົກໂປໂລທີ່ຖືວ່າ “ຄວາມທຸກລຳບາກອັນເບົາບາງ ແລະ ຊົ່ວຄາວຂອງພວກເຮົາ ກຳກຳລັງເຮັດໃຫ້ພວກເຮົາໄດ້ຮັບກຽດນິຣັນດອນ” ແລະ ເໝືອນກັບໂມເຊທີ່ “ຖືວ່າການອັບອາຍຂາຍໜ້າເພື່ອພຣະຄຣິສເຈົ້ານັ້ນ ກໍມີຄ່າຫຼາຍກວ່າຊັບສົມບັດທັງຫຼາຍຂອງເອຢິບ.” (2 ໂກຣິນໂທ 4:17 LCV; ເຮັບເຣີ 11:26 LCV). *{GC 460.1}*

ບໍ່ວ່າພວກເຂົາຈະອ້າງຕົວເປັນຫຍັງກໍຕາມ, ຄົນທີ່ມີໃຈຜູກພັນກັບທາງໂລກເທົ່ານັ້ນ ທີ່ເຮັດຕາມນະໂຍບາຍແທນທີ່ຈະເຮັດຕາມຫຼັກການໃນເລື່ອງສາສະໜາ. ພວກເຮົາຄວນເລືອກເຮັດສິ່ງທີ່ຖືກຕ້ອງ ເພາະມັນຖືກຕ້ອງ ແລະ ມອບຜົນທີ່ຈະຕາມມາໄວ້ໃນພຣະຫັດຂອງພຣະເຈົ້າ. ການປະຕິຮູບອັນຍິ່ງໃຫຍ່ຂອງໂລກເກີດຂຶ້ນໄດ້ຍ້ອນຄົນທີ່ມີຫຼັກການ, ມີຄວາມເຊື່ອ ແລະ ມີຄວາມກ້າຫານ. ວຽກງານປະຕິຮູບໃນຍຸກນີ້ກໍຕ້ອງໄດ້ຮັບການສານຕໍ່ ໂດຍຄົນທີ່ມີລັກສະນະແບບດຽວກັນນີ້. *{GC 460.2}*

ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: “ຄົນທັງຫຼາຍທີ່ຮູ້ຈັກຄວາມຊອບທຳ ທີ່ມີພຣະບັນຍັດຂອງເຮົາໄວ້ໃນໃຈ: ທ່ານຈົ່ງຟັງເຮົາເທີນ, ຢ່າສູ່ຢ້ານຄວາມປະຈານຂາຍໜ້າຈາກມະນຸດ ແລະ ຢ່າສູ່ຢ້ານຄຳໝິ່ນປະໝາດຂອງເຂົາ. ເໝດວ່າ, ມົດແມງຈະກັດກິນເຂົາຄືເສື້ອຜ້າ ແລະ ມອດຈະກັດກິນເຂົາຄືຂົນແບ້, ແຕ່ວ່າຄວາມຊອບທຳຂອງເຮົາຈະຕັ້ງຢູ່ສືບໆໄປເປັນນິດ ແລະ ຄວາມພົ້ນຂອງເຮົາຕັ້ງແຕ່ຊົ່ວອາຍຸນີ້ໄປຊົ່ວອາຍຸນັ້ນ.” (ເອຊາຢາ 51:7, 8 ດັດແປງຈາກສະບັບລາວບູຮານ). *{GC 460.3}*

27

ການຟື້ນຟູໃນສະໄໝໃໝ່

ຄຸນລັກສະນະຂອງການຟື້ນຟູທີ່ແທ້ຈິງ

ໃນທຸກບ່ອນທີ່ພຣະຄຳຂອງພຣະເຈົ້າໄດ້ຖືກປະກາດດ້ວຍຄວາມສັດຊື່, ຜົນທີ່ຕາມມາໄດ້ພິສູດໃຫ້ເຫັນວ່າ ການປະກາດນັ້ນມາຈາກພຣະເຈົ້າ. ພຣະວິນຍານຂອງພຣະເຈົ້າສະຖິດຢູ່ກັບການປະກາດຂອງບັນດາຜູ້ຮັບໃຊ້ຂອງພຣະອົງ ເຮັດໃຫ້ການປະກາດນັ້ນເຕັມໄປດ້ວຍຣິດອຳນາດ; ສ່ວນຄົນບາບກໍສຳນຶກໃນຄວາມຜິດຂອງຕົນ. “ຄວາມສະຫວ່າງແທ້ທີ່ໃຫ້ຄວາມສະຫວ່າງແກ່ມະນຸດທຸກຄົນ” (ໂຢຮັນ 1:9 LCV) ໄດ້ສ່ອງແສງເຂົ້າໄປໃນສ່ວນເລິກຂອງຈິດວິນຍານ ແລະ ສິ່ງທີ່ເຄີຍເຊື່ອງຊ່ອນໃນຄວາມມືດກໍຖືກເປີດເຜີຍອອກມາ. ພວກເຂົາສຳນຶກຢ່າງເລິກເຊິ່ງຈັບໃຈເຖິງຄວາມຜິດບາບ, ຄວາມຊອບທຳ ແລະ ການພິພາກສາທີ່ຈະມາເຖິງ. ພວກເຂົາສຳຜັດເຖິງຄວາມຊອບທຳຂອງພຣະເຢໂຮວາ ແລະ ຮູ້ສຶກຢ້ານກົວທີ່ຈະຕ້ອງຢືນຢູ່ຕໍ່ໜ້າພຣະອົງຜູ້ຊົງຄົ້ນຫາຈິດໃຈ ໃນສະພາບທີ່ຕົນມີຄວາມຜິດບາບ ແລະ ມົນທິນມົວໝອງ. ພວກເຂົາຈຶ່ງຮ້ອງອອກມາດ້ວຍຄວາມທຸກໃຈວ່າ: “ຜູ້ໃດຈະກອບກູ້ເຮົາໃຫ້ລອດພົ້ນຈາກຮ່າງກາຍແຫ່ງຄວາມຕາຍນີ້ໄດ້?” (ໂຣມ 7:24 LCV). ເມື່ອພວກເຂົາໄດ້ເຫັນໄມ້ກາງແຂນແຫ່ງພູເຂົາຄານວາຣີ ແລະ ການເສຍສະຫຼະຢ່າງບໍ່ມີຂອບເຂດຂອງພຣະຄຣິສເພື່ອໄຖ່ບາບຂອງມະນຸດ, ພວກເຂົາຈຶ່ງເຂົ້າໃຈວ່າ ມີແຕ່ຄຸນຄວາມດີຂອງພຣະອົງເທົ່ານັ້ນ ທີ່ສາມາດລຶບລ້າງການລະເມີດຂອງພວກເຂົາໄດ້; ສິ່ງນີ້ພຽງຢ່າງດຽວເທົ່ານັ້ນ ທີ່ສາມາດເຮັດໃຫ້ມະນຸດຄືນດີກັບພຣະເຈົ້າໄດ້. ດ້ວຍຄວາມເຊື່ອ ແລະ ໃຈຖ່ອມ ພວກເຂົາຈຶ່ງຮັບເອົາລູກແກະຂອງພຣະເຈົ້າ ຜູ້ຮັບເອົາບາບຂອງໂລກໄປ; ພວກເຂົາຈຶ່ງໄດ້ຮັບການຍົກບາບທີ່ເຮັດໄປແລ້ວນັ້ນ ໂດຍທາງພຣະໂລຫິດຂອງພຣະເຢຊູ. *{GC 461.1}*

ຄົນເຫຼົ່ານີ້ໄດ້ເກີດຜົນທີ່ສົມກັບການຖິ້ມໃຈເກົ່າເອົາໃຈໃໝ່. ພວກເຂົາເຊື່ອ ແລະ ໄດ້ຮັບບັບຕິສະມາ ແລ້ວດຳເນີນຊີວິດໃໝ່ໃນຖານະຄົນທີ່ຖືກສ້າງຂຶ້ນໃໝ່ໃນພຣະເຢຊູຄຣິສ. ພວກເຂົາບໍ່ໄດ້ເຮັດຕາມຄວາມປາຖະໜາຊົ່ວຂອງຊີວິດເກົ່າ ແຕ່ໄດ້ຕິດຕາມຮອຍພຣະບາດຂອງພຣະເຢຊູດ້ວຍຄວາມເຊື່ອທີ່ມາຈາກພຣະອົງ, ທັງໄດ້ສະທ້ອນພຣະລັກສະນະຂອງພຣະອົງ ແລະ ຊຳລະຕົນເອງໃຫ້ບໍຣິສຸດເໝືອນດັ່ງພຣະອົງຊົງບໍຣິສຸດ. ສິ່ງທີ່ພວກເຂົາເຄີຍກຽດຊັງໃນເມື່ອກ່ອນ ບັດນີ້ກັບກາຍເປັນສິ່ງທີ່ຕົນຊື່ນຊົມຍິນດີ ແລະ ສິ່ງທີ່ເຄີຍຊື່ນຊົມຍິນດີ ບັດນີ້ກໍກັບກຽດຊັງ. ຄົນທີ່ເຄີຍຈອງຫອງ ແລະ ເຊື່ອໝັ້ນໃນຕົວເອງເກີນໄປ ໄດ້ກາຍເປັນຄົນອ່ອນສຸພາບ ແລະ ອ່ອນນ້ອມຖ່ອມຕົນ. ຄົນທີ່ເຄີຍອວດອ້ຽງທະນົງຕົວ ໄດ້ກາຍເປັນຄົນຈິງຈັງ ແລະ ສະຫງົບສຸຂຸມ. ຄົນທີ່ເຄີຍຫຍາບຄາຍໄດ້ກາຍເປັນຄົນທີ່ສະແດງຄວາມເຄົາລົບນັບຖື, ຄົນຂີ້ເຫຼົ້າເມົາຢາໄດ້ກາຍເປັນຄົນມີສະຕິ ແລະ ຄົນເສເພກໍກາຍເປັນຄົນບໍຣິສຸດ. ແຟຊັ່ນອັນບໍ່ມີສາລະຂອງຊາວໂລກຖືກປະຖິ້ມໄປ; ຄຣິສຕຽນບໍ່ໄດ້ສະແຫວງຫາ “ການຕົບແຕ່ງພາຍນອກເຊັ່ນວ່າ: ການເຮັດຊົງຜົມທີ່ປານີດ, ໃສ່ເຄື່ອງປະດັບຄຳ ຫຼື ເຄື່ອງນຸ່ງທີ່ງາມ. ແຕ່ . . . ຄວາມງາມທີ່ຢູ່ພາຍໃນ ຄືຄວາມງາມທີ່ບໍ່

ເສື້ອມສູນຂອງຈິດໃຈທີ່ອ່ອນນ້ອມ ແລະ ສະຫງົບ ເຊິ່ງມີຄຸນຄ່າໃນສາຍຕາຂອງພຣະເຈົ້າຫຼາຍ.” (1 ເປໂຕ 3:3, 4 LCV). {GC 461.2}

ການຟື້ນຟູໄດ້ນຳພາໃຫ້ຄົນຖ່ອມໃຈລົງ ແລະ ສຳຫຼວດຈິດໃຈຢ່າງເລິກເຊິ່ງ. ມີການປະກາດເຕືອນດ້ວຍຄວາມຈິງຈັງ ແລະ ມີການຮ້ອງຂໍຢ່າງໜັກແໜ້ນໃຫ້ຄົນບາບກັບໃຈ. ຜູ້ປະກາດມີຄວາມເມດຕາສົ່ງສານຕໍ່ຜູ້ທີ່ພຣະຄຣິສຊົງໄຖ່ດ້ວຍພຣະໂລຫິດຂອງພຣະອົງ. ທັງຜູ້ຊາຍ ແລະ ຜູ້ຍິງໄດ້ອະທິຖານຢ່າງໜັກແໜ້ນຕໍ່ພຣະເຈົ້າເພື່ອຄວາມລອດພົ້ນຂອງຜູ້ຄົນ. ຜົນຂອງການຟື້ນຟູເຫຼົ່ານີ້ເຫັນໄດ້ໃນຊີວິດຂອງຜູ້ທີ່ບໍ່ຫວັ່ນໄຫວຕໍ່ການປະຕິເສດຕົນເອງ ແລະ ການເສຍສະຫຼະ. ຄົນເຫຼົ່ານີ້ມີຄວາມຊົມຊື່ນຍິນດີທີ່ຖືກນັບວ່າມີຄວາມຄູ່ຄວນທີ່ຈະຖືກດູໝິ່ນ ແລະ ປະສົບກັບຄວາມຍາກລຳບາກເພື່ອພຣະຄຣິສ. ຜູ້ຄົນໄດ້ເຫັນການປ່ຽນແປງໃນຊີວິດຂອງຜູ້ທີ່ຮັບເຊື່ອໃນພຣະນາມຂອງພຣະເຢຊູ. ສັງຄົມໄດ້ປ່ຽນແປງໄປໃນທາງທີ່ດີຍ້ອນແບບຢ່າງຂອງພວກເຂົາ. ພວກເຂົາໄດ້ຮ່ວມເກັບກ່ຽວກັບພຣະຄຣິສ ແລະ ຫວ່ານຕາມພຣະວິນຍານເພື່ອຈະໄດ້ຮັບຊີວິດອັນຕະຫຼອດໄປເປັນນິດ. {GC 462.1}

ອາດເວົ້າກ່ຽວກັບຄົນເຫຼົ່ານີ້ໄດ້ວ່າ: “ຄວາມທຸກໃຈນັ້ນ ໄດ້ນຳພວກເຈົ້າໄປສູ່ການກັບໃຈໃໝ່.” “ຄວາມທຸກໃຈໃນທາງຂອງພຣະເຈົ້ານັ້ນ ນຳເອົາການກັບໃຈໃໝ່ທີ່ນຳໄປສູ່ຄວາມພົ້ນ ແລະ ບໍ່ມີຄວາມເສຍໃຈເຫຼືອຢູ່, ແຕ່ຄວາມທຸກໃຈໃນທາງຂອງໂລກນັ້ນ ນຳໄປສູ່ຄວາມຕາຍ. ເບິ່ງແມ ຄວາມທຸກໃຈໃນທາງຂອງພຣະເຈົ້ານັ້ນ ໄດ້ສົ່ງຜົນອັນໃດໃຫ້ແກ່ພວກເຈົ້າແດ່: ເປັນຕົ້ນວ່າຄວາມເອົາຈິງເອົາຈັງ, ຄວາມກະຕືລືລົ້ນທີ່ຈະແກ້ຕົວ, ຄວາມຄຽດ, ຄວາມຕື່ນຕົວ, ຄວາມປາຖະໜາ, ຄວາມຫ່ວງໃຍ, ການກຽມພ້ອມທີ່ຈະພົບຄວາມຍຸຕິທຳ. ພວກເຈົ້າໄດ້ພິສູດຕົນເອງໃນທຸກຈຸດແລ້ວວ່າ ພວກເຈົ້າບໍ່ມີຄວາມຜິດໃນເລື່ອງນີ້.” (2 ໂກຣິນໂທ 7:9–11 LCV). {GC 462.2}

ນີ້ແມ່ນຜົນງານຂອງພຣະວິນຍານຂອງພຣະເຈົ້າ; ຕ້ອງມີການປ່ຽນແປງໃນຊີວິດເຖິງຈະເປັນການກັບໃຈທີ່ແທ້ຈິງ. ຖ້າຄົນບາບໄດ້ສົ່ງຄືນຂອງຈຳນຳໃຫ້ແກ່ລູກໜີ້, ຄືນສິ່ງທີ່ລັກມາ, ສາລະພາບຄວາມບາບຂອງຕົນ ແລະ ສະແດງຄວາມຮັກຕໍ່ພຣະເຈົ້າ ແລະ ເພື່ອນມະນຸດ, ລາວກໍໝັ້ນໃຈໄດ້ວ່າ ຕົນໄດ້ພົບສັນຕິສຸກກັບພຣະເຈົ້າແລ້ວ. ຜົນໃນລັກສະນະເຊັ່ນນີ້ເອງ ທີ່ເກີດຂຶ້ນຫຼັງຈາກການຟື້ນຟູຄວາມເຊື່ອໃນສະໄໝກ່ອນ. ເມື່ອພິຈາລະນາຈາກໝາກຜົນທີ່ເກີດຂຶ້ນ, ຈຶ່ງເຫັນໄດ້ວ່າ ພຣະເຈົ້າຊົງອວຍພອນໃຫ້ຄົນໄດ້ຮັບຄວາມລອດພົ້ນ ແລະ ຊົງຍົກລະດັບຊີວິດຂອງມະນຸດສະໂລກທັງປວງ. {GC 462.3}

ແຕ່ການຟື້ນຟູຫຼາຍຄັ້ງໃນສະໄໝນີ້ ແຕກຕ່າງຈາກການຟື້ນຟູໃນສະໄໝກ່ອນ ເພາະເມື່ອກ່ອນນັ້ນຈະເຫັນພຣະຄຸນຂອງພຣະເຈົ້າປາກົດຜ່ານວຽກງານຂອງຜູ້ຮັບໃຊ້ຂອງພຣະອົງຫຼາຍກວ່າໃນຍຸກນີ້. ເຖິງແມ່ນວ່າມີຄວາມສົນໃຈຢ່າງກວ້າງຂວາງ, ມີຫຼາຍຄົນອ້າງວ່າໄດ້ກັບໃຈ ແລະ ມີຄົນເຂົ້າມາເປັນສະມາຊິກຄຣິສຕະຈັກເພີ່ມຂຶ້ນຢ່າງຫຼວງຫຼາຍ, ແຕ່ຜົນທີ່ໄດ້ຮັບກໍບໍ່ໄດ້ຢືນຢັນວ່າມີການເຕີບໃຫຍ່ຂຶ້ນໃນຊີວິດຝ່າຍຈິດວິນຍານຢ່າງແທ້ຈິງ. ໄຟທີ່ລຸກໄໝ້ພຸ່ງຊົ່ວຄາວກໍມອດລົງຢ່າງໄວວາ, ເຫຼືອແຕ່ຄວາມມືດດຳທີ່ໜາກວ່າເກົ່າ. {GC 463.1}

ການຟື້ນຟູຕາມສະໄໝນິຍົມສ່ວນຫຼາຍ ມັກເກີດຂຶ້ນຈາກການດຶງດູດຄວາມຢາກຮູ້ຢາກເຫັນ, ສ້າງອາລົມຕື່ນເຕັ້ນ ແລະ ເອົາໃຈຜູ້ທີ່ມັກສິ່ງແປກໃໝ່. ຜູ້ທີ່ຮັບເຊື່ອດ້ວຍວິທີນີ້ ບໍ່ມີຄວາມປາຖະໜາທີ່ຈະຟັງຄວາມຈິງຈາກພຣະຄຳພີ ແລະ ບໍ່ສົນໃຈໃນຖ້ອຍຄຳຂອງບັນດາຜູ້ເຜີຍພຣະທຳ ແລະ ອັກຄະສາວົກ. ຖ້າການນະມັດສະການບໍ່ມີສິ່ງແປກໃໝ່ພວກເຂົາກໍບໍ່ສົນໃຈ. ຄົນເຫຼົ່ານີ້ບໍ່ຕອບຮັບຕໍ່ການປະກາດທີ່ອາໄສເຫດຜົນ ໂດຍປາສະຈາກການກະຕຸ້ນອາລົມໃຫ້ຕື່ນເຕັ້ນ. ຄຳເຕືອນອັນຈະແຈ້ງຈາກພຣະຄຳຂອງພຣະເຈົ້າທີ່ກ່ຽວຂ້ອງໂດຍກົງກັບຊີວິດນິຣັນຂອງພວກເຂົາກໍຖືກລະເລີຍ. {GC 463.2}

ທຸກຄົນທີ່ກັບໃຈໃໝ່ຢ່າງແທ້ຈິງຈະຖືວ່າ ການມີຄວາມສຳພັນກັບພຣະເຈົ້າ ແລະ ສິ່ງທີ່ກ່ຽວຂ້ອງກັບຊີວິດນິຣັນ ເປັນເລື່ອງສຳຄັນທີ່ສຸດໃນຊີວິດ. ແຕ່ໃນບັນດາຄຣິສຕະຈັກທີ່ມີຄົນນິຍົມຫຼາຍໃນປັດຈຸບັນນີ້, ການອຸທິດຖວາຍຕົວໃຫ້ກັບພຣະເຈົ້າຢູ່ໃສ? ຜູ້ທີ່ຮັບເຊື່ອບໍ່ໄດ້ປະຖິ້ມຄວາມທະນົງຕົວ ຫຼື ຄວາມນິຍົມທາງຝ່າຍໂລກ. ພວກເຂົາບໍ່ຍອມປະຕິເສດຕົນເອງ, ບໍ່ຍອມແບກໄມ້ກາງແຂນ ແລະ ຕິດຕາມພຣະເຢຊູຜູ້ອ່ອນນ້ອມຖ່ອມຕົນ ເຊິ່ງບໍ່ຕ່າງຫຍັງກັບຊີວິດກ່ອນການກັບໃຈຮັບເຊື່ອ. ສາສະໜາກາຍເປັນເລື່ອງຕະຫຼົກຂອງພວກບໍ່ເຊື່ອໃນພຣະເຈົ້າ ເພາະຫຼາຍຄົນທີ່ອ້າງຕົນເປັນຜູ້ເຊື່ອ ບໍ່ເຂົ້າໃຈຫຼັກການຂອງສາສະໜາ. ຄຣິສຕະຈັກຫຼາຍແຫ່ງເກືອບຈະບໍ່ມີພະລັງໂນ້ມນ້າວທີ່ເກີດຈາກແບບຢ່າງຊີວິດທີ່ສະທ້ອນເຖິງພຣະລັກສະນະຂອງພຣະເຈົ້າ. ຄົນທັງຫຼາຍພາກັນລືມພຣະເຈົ້າຍ້ອນງານລ້ຽງສັງສັນ, ການສະແດງລະຄອນໃນໂບດ, ງານຕະຫຼາດນັດຫາທຶນໃຫ້ຄຣິສຕະຈັກ, ການປະດັບປະດາເຮືອນຊານຢ່າງຫຼູຫຼາ ແລະ ການແຕ່ງກາຍຢ່າງອວດອົ່ງທະນົງຕົວ. ຄວາມຄິດຂອງຄົນຈົດຈໍ່ຢູ່ແຕ່ໃນເລື່ອງທີ່ດິນ, ຊັບສິນ ແລະ ວຽກງານທາງໂລກ, ສ່ວນສິ່ງທີ່ກ່ຽວຂ້ອງກັບຊີວິດນິຣັນກັບບໍ່ໄດ້ຮັບການເອົາໃຈໃສ່. *{GC 463.3}*

ຜູ້ຕິດຕາມທີ່ແທ້ຈິງຂອງພຣະຄຣິສ

ເຖິງແມ່ນວ່າຄວາມເຊື່ອ ແລະ ການດຳເນີນຊີວິດຄຣິສຕຽນສ່ວນຫຼາຍໄດ້ເສື່ອມລົງ, ແຕ່ກໍຍັງມີຜູ້ຕິດຕາມທີ່ສັດຊື່ຂອງພຣະຄຣິສຢູ່ໃນບັນດາຄຣິສຕະຈັກເຫຼົ່ານີ້. ກ່ອນທີ່ພຣະເຈົ້າຈະສົ່ງໄພພິບັດມາ ເພື່ອລົງໂທດຊາວໂລກເປັນຄັ້ງສຸດທ້າຍ, ຈະມີການຟື້ນຟູຄວາມເຊື່ອຂຶ້ນໃນທ່າມກາງໄພພິບັດຂອງພຣະເຈົ້າຢ່າງທີ່ບໍ່ເຄີຍເກີດຂຶ້ນນັບຕັ້ງແຕ່ສະໄໝຂອງພວກອັກຄະສາວົກ. ພຣະເຈົ້າຈະປະທານພຣະວິນຍານ ແລະ ຣິດອຳນາດຂອງພຣະອົງແກ່ໄພພິບັດຂອງພຣະອົງ. ໃນເວລານັ້ນ, ຫຼາຍຄົນຈະແຍກອອກຈາກຄຣິສຕະຈັກທີ່ຮັບເອົາຄວາມຮັກໃນທາງໂລກເຂົ້າມາແທນທີ່ຄວາມຮັກຕໍ່ພຣະເຈົ້າ ແລະ ພຣະຄຳຂອງພຣະອົງ. ທັງສາສະໜາຈານ ແລະ ສະມາຊິກຈຳນວນຫຼາຍ ຈະຍິນດີຮັບເອົາຄວາມຈິງອັນຍິ່ງໃຫຍ່ເຫຼົ່ານັ້ນ ທີ່ພຣະເຈົ້າຊົງໃຫ້ປະກາດໃນເວລານີ້ ເພື່ອກຽມປະຊາກອນໄວ້ສຳລັບການສະເດັດມາຄັ້ງທີສອງຂອງພຣະອົງ. ຊາຕານຢາກຂັດຂວາງວຽກງານນີ້ ແລະ ກ່ອນຈະເຖິງເວລາແຫ່ງການຟື້ນຟູດັ່ງກ່າວ ມັນຈະພະຍາຍາມສະກັດກັ້ນ ໂດຍການນຳເອົາການຟື້ນຟູປອມມາແທນທີ່. ໃນບັນດາຄຣິສຕະຈັກທີ່ມັນສາມາດຄວບຄຸມດ້ວຍອຳນາດແຫ່ງການຫຼອກລວງຂອງມັນ ມັນຈະເຮັດໃຫ້ເບິ່ງຄືວ່າ ພຣະພອນພິເສດຂອງພຣະເຈົ້າກຳລັງຖືກຖອກເທລົງມາ ແລະ ມີຄວາມສົນໃຈທາງສາສະໜາຢ່າງແຮງກ້າ. ຝູງຊົນຈຳນວນຫຼາຍຈະຊົມຊື່ນຍິນດີວ່າ ພຣະເຈົ້າກຳລັງເຮັດການອັດສະຈັນເພື່ອພວກເຂົາ, ແຕ່ແທ້ຈິງແລ້ວແມ່ນວຽກງານຂອງວິນຍານອື່ນ. ຊາຕານຈະພະຍາຍາມຂະຫຍາຍອິດທິພົນຂອງມັນເໜືອວົງການຄຣິສຕຽນ ໂດຍການແອບອ້າງສາສະໜາ. *{GC 464.1}*

ໃນການຟື້ນຟູຫຼາຍຄັ້ງທີ່ເກີດຂຶ້ນໃນຊ່ວງເຄິ່ງສະຕະວັດທີ່ຜ່ານມານີ້ ພະລັງແບບດຽວກັນນີ້ກໍເຮັດວຽກຢູ່ບໍ່ຫຼາຍກໍໜ້ອຍ ແລະ ເປັນພະລັງດຽວທີ່ຈະສະແດງອອກໃນຂະບວນການຟື້ນຟູອັນກວ້າງຂວາງໃນອະນາຄົດ. ມີຄວາມຕື່ນເຕັ້ນ, ມີການປະປົນກັນລະຫວ່າງສິ່ງທີ່ຈິງ ແລະ ສິ່ງທີ່ບໍ່ຈິງ, ເຊິ່ງເໝາະສົມໃນການຫຼອກລວງຄົນໃຫ້ຫຼົງຜິດ. ເຖິງຢ່າງໃດກໍຕາມ, ບໍ່ຈຳເປັນທີ່ຜູ້ໃດຈະຖືກຫຼອກລວງ. ເມື່ອພິຈາລະນາຕາມຄວາມຈິງໃນພຣະຄຳຂອງພຣະເຈົ້າ, ມັນບໍ່ຍາກທີ່ຈະເຂົ້າໃຈລັກສະນະຂອງຂະບວນການເຫຼົ່ານີ້. ບ່ອນໃດທີ່ຜູ້ຄົນລະເລີຍຄຳສອນໃນພຣະຄຳພີ ແລະ ຫັນໜີຈາກຄວາມຈິງອັນຈະແຈ້ງທີ່ທົດສອບຈິດໃຈ ເຊິ່ງຮຽກຮ້ອງໃຫ້ປະຕິເສດຕົນເອງ ແລະ ປະຖິ້ມທາງໂລກ, ພວກເຮົາກໍສາມາດໝັ້ນໃຈໄດ້

ວ່າ ພຣະເຈົ້າບໍ່ໄດ້ອວຍພອນບ່ອນນັ້ນ. ຕາມກົດເກນທີ່ພຣະຄຣິສປະທານໄວ້ວ່າ, "ພວກເຈົ້າຈະຮູ້ຈັກຄົນເຫຼົ່ານີ້ດ້ວຍການກະທຳຂອງເຂົາ" (ມັດທາຍ 7:16), ຈົ່ງເຫັນໄດ້ຢ່າງແຈ່ມແຈ້ງວ່າ ຂະບວນການເຫຼົ່ານີ້ບໍ່ແມ່ນວຽກງານຂອງພຣະວິນຍານຂອງພຣະເຈົ້າ. {GC 464.2}

ພຣະເຈົ້າຊົງເປີດເຜີຍພຣະອົງເອງແກ່ມະນຸດ ຜ່ານຄວາມຈິງໃນພຣະຄຳຂອງພຣະອົງ. ສຳລັບທຸກຄົນທີ່ຮັບເອົາຄວາມຈິງເຫຼົ່ານີ້ ຈະເປັນເກາະປ້ອງກັນຈາກການຫຼອກລວງຂອງຊາຕານ. ການລະເລີຍຄວາມຈິງດັ່ງກ່າວ ໄດ້ເປີດປະຕູໃຫ້ແກ່ຄວາມຊົ່ວຮ້າຍທີ່ກຳລັງແຜ່ລາມໄປໃນວົງການສາສະໜາ. ລັກສະນະ ແລະ ຄວາມສຳຄັນຂອງພຣະບັນຍັດຂອງພຣະເຈົ້າ ໄດ້ຖືກມອງຂ້າມໄປເປັນສ່ວນໃຫຍ່. ຄວາມເຂົ້າໃຈຜິດກ່ຽວກັບລັກສະນະ ແລະ ຄວາມຖາວອນແຫ່ງພຣະບັນຍັດຂອງພຣະເຈົ້າ ພ້ອມດ້ວຍໜ້າທີ່ໃນການປະຕິບັດຕາມພຣະບັນຍັດນັ້ນ ໄດ້ນຳໄປສູ່ການເຂົ້າໃຈຜິດກ່ຽວກັບການກັບໃຈໃໝ່ ແລະ ການຊຳລະໃຫ້ບໍຣິສຸດ, ເຊິ່ງສົ່ງຜົນໃຫ້ມາດຕະຖານຊີວິດຄຣິສຕຽນເສື່ອມລົງໃນຄຣິສຕະຈັກ. ນີ້ແຫຼະຄືສາເຫດທີ່ແທ້ຈິງ ທີ່ການຟື້ນຟູໃນຍຸກປັດຈຸບັນຈຶ່ງຂາດພຣະວິນຍານ ແລະ ຣິດອຳນາດຂອງພຣະເຈົ້າ. {GC 465.1}

ໃນບັນດາຄະນະນິກາຍຕ່າງໆ ມີຫຼາຍທ່ານທີ່ໂດດເດັ່ນ ເພາະການດຳເນີນຊີວິດໃນສິນທຳ, ເຊິ່ງຄົນເຫຼົ່ານີ້ຍອມຮັບ ແລະ ເສົ້າໃຈຕໍ່ຂໍ້ເທັດຈິງນີ້. ສາດສະດາຈານ ເອັດເວີດ ເອ. ພາກ (Edwards A. Park) ໄດ້ຊີ້ໃຫ້ເຫັນເຖິງສິ່ງທີ່ອັນຕະລາຍສຳລັບສາສະໜາໃນປັດຈຸບັນວ່າ: "ແຫຼ່ງອັນຕະລາຍອັນໜຶ່ງ ແມ່ນການທີ່ນັກເທດບໍ່ໄດ້ເນັ້ນເລື່ອງພຣະບັນຍັດຂອງພຣະເຈົ້າ. ໃນສະໄໝກ່ອນນັກເທດໄດ້ປຸກຈິດສຳນຶກຜິດຊອບຊົ່ວດີ; . . . ຄຳເທດສະໜາຂອງພວກນັກເທດຜູ້ມີຊື່ສຽງທີ່ສຸດຂອງພວກເຮົາ ເຕັມໄປດ້ວຍສະຫງ່າຣາສີ ຍ້ອນພວກເຂົາເຮັດຕາມແບບຢ່າງຂອງພຣະເຢຊູ ໂດຍການໃຫ້ຄວາມສຳຄັນແກ່ພຣະບັນຍັດ, ຂໍ້ກຳນົດ ແລະ ຄຳເຕືອນຕ່າງໆ. ພວກເຂົາໄດ້ເນັ້ນຢ້ຳສອງຫຼັກການສຳຄັນຄື: ພຣະບັນຍັດເປັນການສະທ້ອນເຖິງຄວາມສົມບູນແບບຂອງພຣະເຈົ້າ ແລະ ຄົນທີ່ບໍ່ຮັກພຣະບັນຍັດກໍບໍ່ຮັກຂ່າວປະເສີດ ເພາະວ່າພຣະບັນຍັດກໍຄືກັນກັບຂ່າວປະເສີດ, ເປັນດັ່ງກະຈົກເງົາທີ່ສະທ້ອນພຣະລັກສະນະອັນແທ້ຈິງຂອງພຣະເຈົ້າ. ອັນຕະລາຍຈາກຂໍ້ນີ້ນຳໄປສູ່ອັນຕະລາຍອີກປະການໜຶ່ງ ຄືການປະເມີນຄວາມຮ້າຍແຮງ, ຂອບເຂດ ແລະ ຜົນຮ້າຍຂອງຄວາມບາບຕ່ຳເກີນໄປ. ຍິ່ງພຣະບັນຍັດມີຄວາມຊອບທຳຫຼາຍເທົ່າໃດ ການບໍ່ເຊື່ອຟັງກໍຍິ່ງເປັນຄວາມຜິດຫຼາຍເທົ່ານັ້ນ . . ." {GC 465.2}

"ນອກຈາກໄພອັນຕະລາຍທີ່ກ່າວມາແລ້ວ ຍັງມີໄພອັນຕະລາຍອີກຢ່າງໜຶ່ງ ຄືການເບິ່ງຂ້າມຄວາມຍຸຕິທຳຂອງພຣະເຈົ້າ. ໃນຍຸກນີ້, ຄຳເທດສະໜາມັກແຍກຄວາມຍຸຕິທຳຂອງພຣະເຈົ້າອອກຈາກພຣະກະລຸນາຂອງພຣະອົງ, ເຮັດໃຫ້ພຣະກະລຸນານັ້ນກາຍເປັນພຽງແຕ່ຄວາມຮູ້ສຶກ ແທນທີ່ຈະເປັນຫຼັກການອັນສູງສົ່ງ. ແນວຄິດທາງສາສະໜາສາດສະໄໝໃໝ່ພະຍາຍາມແຍກສິ່ງທີ່ພຣະເຈົ້າຊົງຜູກມັດໄວ້ນຳກັນ. ພຣະບັນຍັດຂອງພຣະເຈົ້າແມ່ນສິ່ງດີ ຫຼື ສິ່ງຊົ່ວ? ມັນເປັນສິ່ງດີ. ສະນັ້ນ, ຄວາມຍຸຕິທຳກໍເປັນສິ່ງດີຄືກັນ ເພາະມັນເປັນຄວາມມຸ່ງໝາຍທີ່ຈະໃຫ້ພຣະບັນຍັດມີຜົນບັງຄັບໃຊ້. ເມື່ອຄົນລຶ້ງເຄີຍກັບການມອງຂ້າມພຣະບັນຍັດ ແລະ ຄວາມຍຸຕິທຳຂອງພຣະເຈົ້າ, ພວກເຂົາກໍມັກຈະມອງຂ້າມຄວາມຮ້າຍແຮງຂອງການບໍ່ເຊື່ອຟັງຂອງມະນຸດ; ຈາກນັ້ນ, ກໍຈະເລີ່ມມອງຂ້າມພຣະຄຸນທີ່ພຣະເຈົ້າຊົງຈັດຫຼຽມໄວ້ເພື່ອໄຖ່ບາບ." ດ້ວຍເຫດນີ້, ຂ່າວປະເສີດຈຶ່ງສູນເສຍຄຸນຄ່າ ແລະ ຄວາມສຳຄັນໃນຄວາມຄິດຂອງຜູ້ຄົນ, ບໍ່ດົນພວກເຂົາກໍພ້ອມທີ່ຈະປະຖິ້ມພຣະຄຳພີໄປດ້ວຍ. {GC 465.3}

ພຣະບັນຍັດແຫ່ງເສລີພາບ

ຜູ້ສອນສາສະໜາຫຼາຍຄົນອ້າງວ່າ ການສິ້ນພຣະຊົນຂອງພຣະຄຣິສໄດ້ລົບລ້າງພຣະບັນຍັດ; ແລະ ມະນຸດບໍ່ຈຳເປັນຕ້ອງຖືຮັກສາພຣະບັນຍັດອີກຕໍ່ໄປ. ບາງຄົນເວົ້າວ່າ ພຣະບັນຍັດເປັນແອກອັນ

ໜັກໜ່ວງ; ພວກເຂົາປຽບທຽບການຕົກເປັນທາດຂອງພຣະບັນຍັດ ກັບເສລີພາບທີ່ຈະໄດ້ຮັບຈາກຂ່າວປະເສີດ. {GC 466.1}

ແຕ່ພວກຜູ້ເຜີຍພຣະທຳ ແລະ ພວກອັກຄະສາວົກ ບໍ່ໄດ້ເຫັນພຣະບັນຍັດອັນບໍຣິສຸດຂອງພຣະເຈົ້າ ໃນແງ່ມຸມນັ້ນ. ກະສັດດາວິດກ່າວວ່າ: “ຂ້ານ້ອຍຈະທ່ຽວໄປໃນບ່ອນກວ້າງ ເຫດວ່າຂ້ານ້ອຍໄດ້ຊອກຫາ ຂໍ້ບັນຍັດແຫ່ງພຣະອົງ.” (ເພງສັນລະເສີນ 119:45 ສະບັບລາວບູຮານ). ອັກຄະສາວົກຢາໂກໂບ ຜູ້ຂຽນພາຍຫຼັງການສິ້ນພຣະຊົນຂອງພຣະຄຣິສ ໄດ້ເອີ້ນພຣະບັນຍັດສິບປະການວ່າ “ພຣະຣາຊບັນຍັດ” ແລະ “ກົດບັນຍັດອັນສົມບູນທີ່ໃຫ້ເສລີພາບ.” (ຢາໂກໂບ 2:8; 1:25 LCV). ຫ້າສິບປີຫຼັງຈາກພຣະເຢຊູຖືກຄຶງໄວ້ທີ່ໄມ້ກາງແຂນ ໂຢຮັນໄດ້ຂຽນໃນພຣະທຳພຣະນິມິດວ່າ “ຄົນທັງຫຼາຍທີ່ປະພຶດຕາມພຣະບັນຍັດຂອງພຣະອົງກໍເປັນສຸກ ເພື່ອວ່າເຂົາຈະໄດ້ມີສິດໃນຕົ້ນໄມ້ແຫ່ງຊີວິດ ແລະ ເພື່ອເຂົາຈະໄດ້ເຂົ້າໄປໃນເມືອງນັ້ນໂດຍທາງປະຕູ.” (ພຣະນິມິດ 22:14 TKJV). {GC 466.2}

ການກ່າວອ້າງວ່າ ການສິ້ນພຣະຊົນຂອງພຣະຄຣິສ ໄດ້ລົບລ້າງພຣະບັນຍັດຂອງພຣະບິດາຂອງພຣະອົງນັ້ນເປັນການອ້າງທີ່ບໍ່ມີມູນຄວາມຈິງ. ຖ້າຫາກພຣະບັນຍັດສາມາດປ່ຽນແປງ ຫຼື ຍົກເລີກໄດ້ ກໍບໍ່ຈຳເປັນໃຫ້ພຣະຄຣິສຕ້ອງສິ້ນພຣະຊົນເພື່ອໄຖ່ມະນຸດໃຫ້ພົ້ນຈາກໂທດຂອງຄວາມບາບ. ການສິ້ນພຣະຊົນຂອງພຣະຄຣິສ ບໍ່ໄດ້ລຶບລ້າງພຣະບັນຍັດ ແລະ ໃນຂະນະດຽວກັນກໍຍັງໄດ້ພິສູດໃຫ້ເຫັນວ່າ ພຣະບັນຍັດນັ້ນປ່ຽນແປງບໍ່ໄດ້. ພຣະບຸດຂອງພຣະເຈົ້າສະເດັດມາເພື່ອ “ເຊີດຊູກົດບັນຍັດ ແລະ ເຮັດໃຫ້ກົດບັນຍັດນັ້ນມີກຽດ.” (ເອຊາຢາ 42:21). ພຣະອົງຊົງກ່າວວ່າ: “ຢ່າຄິດວ່າເຮົາມາເພື່ອລຶບລ້າງກົດບັນຍັດ,” “ຕາບໃດທີ່ສະຫວັນ ແລະ ແຜ່ນດິນໂລກຍັງຕັ້ງຢູ່ ແມ່ນແຕ່ໂຕອັກສອນທີ່ນ້ອຍທີ່ສຸດພຽງໂຕໜຶ່ງ ຫຼື ຈຸດດຽວກໍຈະບໍ່ສູນຫາຍໄປຈາກໜັງສືກົດບັນຍັດ.” (ມັດທາຍ 5:17, 18 LCV). ພຣະເຢຊູຊົງກ່າວກ່ຽວກັບພຣະອົງເອງວ່າ: “ຂ້ານ້ອຍປາຖະໜາຈະເຮັດຕາມພຣະປະສົງຂອງພຣະອົງ ບົດບັນຍັດຂອງພຣະອົງຢູ່ໃນດວງໃຈຂອງຂ້ານ້ອຍ.” (ເພງສັນລະເສີນ 40:8 ດັດແປງຈາກສະບັບ TNCV). {GC 466.3}

ພຣະບັນຍັດຂອງພຣະເຈົ້າບໍ່ສາມາດປ່ຽນແປງໄດ້ ຍ້ອນລັກສະນະພື້ນຖານຂອງມັນເອງ. ພຣະບັນຍັດເປີດເຜີຍໃຫ້ເຫັນພຣະປະສົງ ແລະ ພຣະລັກສະນະຂອງພຣະເຈົ້າ ຜູ້ປະທານພຣະບັນຍັດນັ້ນ. ພຣະເຈົ້າຊົງເປັນຄວາມຮັກ ແລະ ພຣະບັນຍັດຂອງພຣະອົງກໍເປັນຄວາມຮັກເຊັ່ນກັນ. ພຣະບັນຍັດມີຫຼັກການຍິ່ງໃຫຍ່ຢູ່ສອງປະການຄື ຄວາມຮັກຕໍ່ພຣະເຈົ້າ ແລະ ຄວາມຮັກຕໍ່ເພື່ອນມະນຸດ. “ຄວາມຮັກ . . . ເປັນການປະຕິບັດຕາມກົດບັນຍັດຢ່າງຄົບຖ້ວນ.” (ໂຣມ 13:10). ພຣະລັກສະນະຂອງພຣະເຈົ້າ ຄືຄວາມຊອບທຳ ແລະ ຄວາມຈິງ; ພຣະບັນຍັດຂອງພຣະອົງກໍມີລັກສະນະແບບດຽວກັນ. ຜູ້ຂຽນເພງສັນລະເສີນກ່າວວ່າ: “ກົດບັນຍັດຂອງພຣະອົງກໍເປັນຄວາມຈິງ” ແລະ “ພຣະບັນຍັດທັງສິ້ນຂອງພຣະອົງຊອບທຳ.” (ເພງສັນລະເສີນ 119:142, 172 TKJV). ສ່ວນອັກຄະສາວົກໂປໂລປະກາດວ່າ: “ກົດບັນຍັດຈຶ່ງສັກສິດ ແລະ ພຣະບັນຍັດກໍສັກສິດ, ຊອບທຳ ແລະ ດີ.” (ໂຣມ 7:12 LCV). ພຣະບັນຍັດໃນລັກສະນະທີ່ກ່າວມານີ້ ສະແດງເຖິງຄວາມຄິດ ແລະ ພຣະປະສົງຂອງພຣະເຈົ້າ; ສະນັ້ນ, ພຣະບັນຍັດຈຶ່ງຕ້ອງຄົງຢູ່ຊົ່ວນິຣັນດອນ ເໝືອນດັ່ງພຣະເຈົ້າຜູ້ປະທານພຣະບັນຍັດ. {GC 467.1}

ວຽກງານການກັບໃຈໃໝ່ ແລະ ການຊຳລະໃຫ້ບໍຣິສຸດນັ້ນ ແມ່ນການນຳມະນຸດໃຫ້ຄືນດີກັບພຣະເຈົ້າ ໂດຍການນຳພວກເຂົາໃຫ້ສອດຄ່ອງກັບຫຼັກການແຫ່ງພຣະບັນຍັດຂອງພຣະອົງ. ໃນເບື້ອງຕົ້ນນັ້ນ, ພຣະເຈົ້າຊົງສ້າງມະນຸດຕາມພຣະລັກສະນະຂອງພຣະອົງ. ອາດາມສອດຄ່ອງກັບພຣະລັກສະນະຂອງພຣະເຈົ້າ ແລະ ພຣະບັນຍັດຂອງພຣະອົງຢ່າງສົມບູນ. ຫຼັກການແຫ່ງຄວາມຊອບທຳໄດ້ຖືກຈາລຶກໄວ້ໃນຈິດໃຈຂອງລາວ, ແຕ່ຄວາມບາບໄດ້ເຮັດໃຫ້ລາວຖືກແຍກອອກຈາກພຣະຜູ້ສ້າງ, ລາວບໍ່ໄດ້

ສະທ້ອນພຣະລັກສະນະຂອງພຣະເຈົ້າອີກຕໍ່ໄປ. ຈິດໃຈຂອງລາວໄດ້ຕໍ່ສູ້ກັບຫຼັກການແຫ່ງພຣະບັນຍັດ ຂອງພຣະອົງ. “ຈິດໃຈທີ່ຖືກຄວບຄຸມໂດຍເນື້ອໜັງກໍເປັນສັດຕູຕໍ່ພຣະເຈົ້າ, ມັນບໍ່ຍອມຢູ່ໃຕ້ກົດບັນຍັດ ຂອງພຣະເຈົ້າ ແລະ ມັນຈະຢູ່ໃຕ້ກົດບັນຍັດຂອງພຣະເຈົ້າກໍບໍ່ໄດ້.” (ໂຣມ 8:7 LCV). ແຕ່ “ພຣະເຈົ້າ ຮັກໂລກຈົນໄດ້ມອບພຣະບຸດອົງດຽວຂອງພຣະອົງ” (ໂຢຮັນ 3:16 LCV) ເພື່ອມະນຸດຈະໄດ້ຄືນດີກັບ ພຣະເຈົ້າ. ດ້ວຍຄຸນຄວາມດີຂອງພຣະຄຣິສ, ມະນຸດສາມາດກັບຄືນສູ່ຄວາມກົມກຽວກັບພຣະຜູ້ສ້າງອີກ ຄັ້ງ; ຈິດໃຈຂອງພວກເຂົາຕ້ອງໄດ້ຮັບການປ່ຽນແປງໂດຍພຣະຄຸນຂອງພຣະເຈົ້າ; ພວກເຂົາຕ້ອງໄດ້ຮັບ ຊີວິດໃໝ່ຈາກສະຫວັນ. ການປ່ຽນແປງນີ້ແມ່ນການບັງເກີດໃໝ່, ເຊິ່ງຖ້າປາສະຈາກການບັງເກີດໃໝ່ນີ້ ແລ້ວ, ພຣະເຢຊູຊົງກ່າວວ່າ, “ຈະເຫັນອານາຈັກຂອງພຣະເຈົ້າບໍ່ໄດ້.” (ໂຢຮັນ 3:3). *{GC 467.2}*

ການສຳນຶກໃນຄວາມບາບ

ຂັ້ນຕອນທຳອິດໃນການຄືນດີກັບພຣະເຈົ້າ ແມ່ນການສຳນຶກໃນຄວາມບາບ. “ບາບກໍຄືການ ລະເມີດກົດບັນຍັດ.” “ກົດບັນຍັດໄດ້ເຮັດໃຫ້ສັງເກດຮູ້ຈັກຄວາມບາບ.” (1 ໂຢຮັນ 3:4 LCV; ໂຣມ 3:20). ຄົນບາບຕ້ອງເອົາອຸປະນິໄສຂອງຕົນໄປວັດແທກດ້ວຍມາດຕະຖານອັນສູງສົ່ງແຫ່ງຄວາມຊອບທຳ ຂອງພຣະເຈົ້າ ຈຶ່ງຈະເຫັນຄວາມຜິດຂອງຕົນໄດ້. ພຣະບັນຍັດເປັນເໝືອນແວ່ນແຍງ ທີ່ສະທ້ອນໃຫ້ເຫັນ ຄວາມສົມບູນແບບຂອງອຸປະນິໄສອັນຊອບທຳ ແລະ ຊ່ວຍໃຫ້ຄົນເຫັນຂໍ້ບົກຜ່ອງຂອງຕົນເອງ. *{GC 467.3}*

ພຣະບັນຍັດເປີດເຜີຍຄວາມບາບຂອງມະນຸດ ແຕ່ບໍ່ໄດ້ຈັດຫາທາງແກ້ໄຂໃຫ້ກັບຄວາມບາບ. ໃນ ຂະນະທີ່ສັນຍາວ່າ ຜູ້ທີ່ປະຕິບັດຕາມຈະໄດ້ຊີວິດ, ພຣະບັນຍັດປະກາດວ່າຜູ້ທີ່ລະເມີດກໍຈະຕ້ອງ ຕາຍ. ມີແຕ່ຂ່າວປະເສີດຂອງພຣະຄຣິສເທົ່ານັ້ນ ທີ່ສາມາດປົດປ່ອຍມະນຸດຈາກການຖືກຕັດສິນ ລົງໂທດ ແລະ ມົນທິນອັນເປິເປື້ອນຂອງຄວາມບາບ. ດ້ວຍເຫດທີ່ຄົນບາບໄດ້ລ່ວງລະເມີດພຣະບັນຍັດ ຂອງພຣະເຈົ້າ, ສະນັ້ນ, ເຂົາຕ້ອງກັບໃຈໃໝ່ຕໍ່ພຣະອົງ. ເຂົາຕ້ອງມີຄວາມເຊື່ອໃນພຣະຄຣິສ ຜູ້ຊົງເປັນ ເຄື່ອງບູຊາໄຖ່ບາບ. ດ້ວຍເຫດນີ້, ເຂົາຈຶ່ງໄດ້ຮັບ “ການຍົກບາບທີ່ກະທຳໄປແລ້ວ” (ໂຣມ 3:25 ສະບັບ ລາວບູຮານ) ແລະ ກາຍເປັນຜູ້ມີສ່ວນໃນສະພາບຂອງພຣະເຈົ້າ. ເຂົາກາຍເປັນບຸດຂອງພຣະເຈົ້າ, ໂດຍ ພຣະວິນຍານໄດ້ຮັບເຂົາເປັນລູກບຸນທຳ, ເຂົາຈຶ່ງຮ້ອງວ່າ: “‘ອັບບາ’ ຄື ‘ພຣະບິດາເຈົ້າ.’” (ຄາລາເຕຍ 4:6). *{GC 467.4}*

ຖ້າຢ່າງນັ້ນ, ເຂົາມີເສລີພາບທີ່ຈະລະເມີດພຣະບັນຍັດຂອງພຣະເຈົ້າແລ້ວບໍ່? ອາຈານໂປໂລກ່າວວ່າ: “ພວກເຮົາລຶບລ້າງກົດບັນຍັດດ້ວຍຄວາມເຊື່ອບໍ? ບໍ່ແມ່ນຢ່າງນັ້ນດອກ! ພວກເຮົາເປັນຜູ້ສະໜັບສະໜູນ ກົດບັນຍັດ.” (ໂຣມ 3:31 LCV). ເພິ່ນຍັງຖາມຕື່ມວ່າ: “ພວກເຮົາເປັນຜູ້ທີ່ໄດ້ຕາຍຕໍ່ບາບກຳນັ້ນ ແລ້ວ; ພວກເຮົາຈະດຳເນີນຊີວິດໃນຄວາມບາບນັ້ນຕໍ່ໄປໄດ້ຢ່າງໃດ?” (ໂຣມ 6:2 LCV). ສ່ວນໂຢຮັນ ປະກາດວ່າ: “ນີ້ແຫຼະ ເປັນຄວາມຮັກຕໍ່ພຣະເຈົ້າ ຄືໃຫ້ເຮົາທັງຫຼາຍຖືຮັກສາບັນດາກົດບັນຍັດຂອງ ພຣະອົງ ແລະ ກົດບັນຍັດຂອງພຣະອົງນັ້ນ ກໍບໍ່ຍາກໜັກເກີນໄປ.” (1 ໂຢຮັນ 5:3). ໃນການບັງເກີດໃໝ່ ນັ້ນ ຈິດໃຈຈະຖືກປັບປ່ຽນໃຫ້ສອດຄ່ອງກັບພຣະເຈົ້າ ໂດຍການຖືກປັບປ່ຽນໃຫ້ສອດຄ່ອງກັບພຣະບັນຍັດ ຂອງພຣະອົງ. ເມື່ອການປ່ຽນແປງອັນຍິ່ງໃຫຍ່ນີ້ເກີດຂຶ້ນໃນຊີວິດຂອງຄົນບາບ, ລາວກໍໄດ້ກ້າວອອກຈາກ ຄວາມຕາຍໄປສູ່ຊີວິດ, ຈາກຄວາມບາບໄປສູ່ຄວາມບໍຣິສຸດ, ຈາກການລະເມີດ ແລະ ການກະບົດໄປສູ່ ການເຊື່ອຟັງ ແລະ ຄວາມຈົງຮັກພັກດີ. ຊີວິດເກົ່າທີ່ຫ່າງເຫີນຈາກພຣະເຈົ້າໄດ້ສິ້ນສຸດລົງ ແລະ ຊີວິດ ໃໝ່ທີ່ໄດ້ຄືນດີກັບພຣະເຈົ້າ ອັນເປັນຊີວິດທີ່ເຕັມໄປດ້ວຍຄວາມຮັກ ແລະ ຄວາມເຊື່ອໄດ້ເລີ່ມຕົ້ນ ຂຶ້ນ. ດັ່ງນັ້ນ, “ຄວາມຊອບທຳຂອງທຳມະບັນຍັດຈະໄດ້ສຳເລັດໃນຕົວເຮົາ ຜູ້ບໍ່ດຳເນີນຕາມເນື້ອໜັງ ແຕ່ ຕາມພຣະວິນຍານ.” (ໂຣມ 8:4 THSV). ແລ້ວຈິດໃຈຈະໂຮ່ຮ້ອງອອກມາວ່າ: “ຂ້ານ້ອຍຮັກກົດບັນຍັດ

ຂອງ ພຣະ ອົງ ຫຼວງ ຫຼາຍ ທີ່ ສຸດ ຂ້າ ນ້ອຍ ພາ ວັນ ນາ ເຖິງ ກົດ ບັນ ຍັດ ຢູ່ ຕະ ຫຼອດ ວັນ." (ເພງ ສັນ ລະ ເສີນ 119:97). *{GC 468.1}*

"ກົດ ບັນ ຍັດ ຂອງ ອົງ ພຣະ ຜູ້ ເປັນ ເຈົ້າ ຄົບ ຖ້ວນ ແລະ ສົມ ບູນ ດີ ເປັນ ທີ່ ຟື້ນ ຟູ ຈິດ ໃຈ ໃຫ້ ມີ ແຮງ ຂຶ້ນ ໃໝ່." (ເພງ ສັນ ລະ ເສີນ 19:7 LO2012). ຖ້າ ບໍ່ ມີ ພຣະ ບັນ ຍັດ ມະ ນຸດ ກໍ ບໍ່ ສາ ມາດ ເຂົ້າ ໃຈ ເຖິງ ຄວາມ ບໍ ຣິ ສຸດ ຂອງ ພຣະ ເຈົ້າ ຫຼື ຮູ້ ເຖິງ ຄວາມ ຜິດ ບາບ ແລະ ຄວາມ ບໍ່ ສະ ອາດ ຂອງ ຕົນ ເອງ. ມະ ນຸດ ຈະ ບໍ່ ມີ ຄວາມ ສຳ ນຶກ ອັນ ແທ້ ຈິງ ໃນ ຄວາມ ບາບ ຂອງ ຕົນ ແລະ ບໍ່ ຮູ້ ສຶກ ວ່າ ຈຳ ເປັນ ຕ້ອງ ກັບ ໃຈ ໃໝ່. ໃນ ເມື່ອ ບໍ່ ເຫັນ ວ່າ ຕົນ ເອງ ເປັນ ຜູ້ ລະ ເມີດ ພຣະ ບັນ ຍັດ ຂອງ ພຣະ ເຈົ້າ ພວກ ເຂົາ ກໍ ບໍ່ ເຂົ້າ ໃຈ ເຖິງ ຄວາມ ຈຳ ເປັນ ທີ່ ຕ້ອງ ໄດ້ ຮັບ ການ ໄຖ່ ດ້ວຍ ພຣະ ໂລ ຫິ ດ ຂອງ ພຣະ ຄຣິ ສ. ພວກ ເຂົາ ຈຶ່ງ ຕັ້ງ ຄວາມ ຫວັງ ທີ່ ຈະ ລອດ ພົ້ນ ໂດຍ ບໍ່ ມີ ການ ປ່ຽນ ແປງ ຈິດ ໃຈ ຢ່າງ ເລິກ ເຊິ່ງ ຫຼື ການ ປັບ ປຸງ ຊີ ວິດ. ສະ ນັ້ນ, ຈຶ່ງ ມີ ການ ກັບ ໃຈ ແບບ ຜິວ ເຜີນ ເກີດ ຂຶ້ນ ຫຼາຍ ແລະ ມີ ຄົນ ຈຳ ນວນ ຫຼວງ ຫຼາຍ ເຂົ້າ ມາ ເປັນ ສະ ມາ ຊິ ກ ຄຣິ ສ ຕະ ຈັກ ໂດຍ ທີ່ ພວກ ເຂົາ ບໍ່ ເຄີຍ ມີ ຄວາມ ສຳ ພັນ ກັບ ພຣະ ຄຣິ ສ. *{GC 468.2}*

ການ ຊຳ ລະ ໃຫ້ ບໍ ຣິ ສຸດ ແມ່ນ ຫຍັງ?

ຄຳ ສອນ ຜິດ ກ່ຽວ ກັບ ການ ຊຳ ລະ ໃຫ້ ບໍ ຣິ ສຸດ ເຊິ່ງ ເກີດ ຈາ ກ ການ ລະ ເລີຍ ຫຼື ການ ປະ ຕິ ເສດ ພຣະ ບັນ ຍັດ ຂອງ ພຣະ ເຈົ້າ ກໍ ມີ ບົດ ບາດ ສຳ ຄັນ ໃນ ຂະ ບວນ ການ ທາງ ສາ ສະ ໜາ ຂອງ ຍຸ ກ ນີ້. ທິ ດ ສະ ດີ ເຫຼົ່າ ນີ້ ບໍ່ ພຽງ ແຕ່ ຜິດ ໃນ ຫຼັກ ຄຳ ສອນ ເທົ່າ ນັ້ນ ແຕ່ ຍັງ ເປັນ ອັນ ຕະ ລາຍ ໃນ ທາງ ປະ ຕິ ບັດ ອີ ກ ດ້ວຍ. ການ ທີ່ ຄຳ ສອນ ເຫຼົ່າ ນີ້ ໄດ້ ຮັບ ຄວາມ ນິ ຍົມ ຢ່າງ ກ ວ້າງ ຂວາງ ຍິ່ງ ເຮັດ ໃຫ້ ມີ ຄວາມ ຈຳ ເປັນ ຫຼາຍ ຂຶ້ນ ທີ່ ທຸ ກ ຄົນ ຈະ ຕ້ອງ ເຂົ້າ ໃຈ ຢ່າງ ແຈ່ມ ແຈ້ ງ ກ່ຽວ ກັບ ສິ່ງ ທີ່ ພຣະ ຄຳ ພີ ສອນ ໃນ ເລື່ອງ ນີ້. *{GC 469.1}*

ພຣະ ຄຳ ພີ ໄດ້ ສອນ ເລື່ອງ ການ ຊຳ ລະ ໃຫ້ ບໍ ຣິ ສຸດ ທີ່ ແທ້ ຈິງ. ອັກ ຄະ ສາ ວົ ກ ໂປ ໂລ ໄດ້ ກ່າວ ໄວ້ ໃນ ຈົດ ໝາຍ ເຖິງ ຄຣິ ສ ຕະ ຈັກ ແຫ່ ງ ເມືອງ ເທ ສະ ໂລ ນິ ກ ວ່າ: "ພຣະ ເຈົ້າ ປະ ສົງ ໃຫ້ ພວກ ເຈົ້າ ໄດ້ ຮັບ ການ ຊຳ ລະ ໃຫ້ ບໍ ຣິ ສຸດ." ເພີ່ນ ຍັງ ໄດ້ ອະ ທິ ຖານ ວ່າ: "ຂໍ ໃຫ້ ພຣະ ເຈົ້າ ເອງ ຜູ້ ເປັນ ພຣະ ເຈົ້າ ແຫ່ ງ ສັນ ຕິ ສຸ ກ ຊຳ ລະ ພວກ ເຈົ້າ ໃຫ້ ບໍ ຣິ ສຸດ ໃນ ທຸ ກ ດ້ານ." (1 ເທ ສະ ໂລ ນິ ກ 4:3 LCV; 5:23 LCV). ພຣະ ຄຳ ພີ ສອນ ຢ່າງ ແຈ່ມ ແຈ້ ງ ວ່າ ການ ຊຳ ລະ ໃຫ້ ບໍ ຣິ ສຸດ ແມ່ນ ຫຍັງ ແລະ ຈະ ໄດ້ ຮັບ ການ ຊຳ ລະ ນັ້ນ ມາ ໄດ້ ຢ່າງ ໃດ. ພຣະ ຜູ້ ຊ່ວຍ ໃຫ້ ລອດ ຊົງ ອະ ທິ ຖານ ເພື່ອ ພວກ ສາ ວົ ກ ຂອງ ພຣະ ອົງ ວ່າ: "ຂໍ ຊຳ ລະ ພວກ ເຂົາ ໃຫ້ ບໍ ຣິ ສຸດ ດ້ວຍ ຄວາມ ຈິ ງ, ພຣະ ທຳ ຂອງ ພຣະ ອົງ ເປັນ ຄວາມ ຈິ ງ." (ໂຢ ຮັນ 17:17 LCV). ອາ ຈານ ໂປ ໂລ ສອນ ວ່າ ຜູ້ ທີ່ ເຊື່ອ ຈະ ໄດ້ ຮັບ ການ "ຊຳ ລະ ໄວ້ ໂດຍ ພຣະ ວິ ນ ຍານ ບໍ ຣິ ສຸດ." (ໂຣ ມ 15:16 THSV). ວຽ ກ ງານ ຂອງ ພຣະ ວິ ນ ຍານ ບໍ ຣິ ສຸດ ແມ່ນ ຫຍັງ? ພຣະ ເຢ ຊູ ຊົງ ກ່າວ ແກ່ ພວກ ສາ ວົ ກ ຂອງ ພຣະ ອົງ ວ່າ: "ເມື່ອ ພຣະ ວິ ນ ຍານ ແຫ່ ງ ຄວາມ ຈິ ງ ມາ ພຣະ ອົງ ຈະ ນຳ ພວກ ເຈົ້າ ໄປ ສູ່ ຄວາມ ຈິ ງ ທັ ງ ໝົ ດ." (ໂຢ ຮັນ 16:13 LCV). ສ່ວນ ຜູ້ ຂຽນ ເພງ ສັນ ລະ ເສີນ ກ່າວ ວ່າ: "ກົດ ບັນ ຍັດ ຂອງ ພຣະ ອົງ ກໍ ເປັນ ຄວາມ ຈິ ງ ຢູ່ ເລື້ອ ຍ." (ເພງ ສັນ ລະ ເສີນ 119:142). ພຣະ ຄຳ ແລະ ພຣະ ວິ ນ ຍານ ຂອງ ພຣະ ເຈົ້າ ເປີດ ເຜີ ຍ ໃຫ້ ມະ ນຸດ ເຫັນ ເຖິງ ຫຼັກ ການ ອັນ ສຳ ຄັນ ແຫ່ ງ ຄວາມ ຊອບ ທຳ ທີ່ ມີ ຢູ່ ໃນ ພຣະ ບັນ ຍັດ ຂອງ ພຣະ ອົງ. ເນື່ອງ ຈາ ກ ວ່າ ພຣະ ບັນ ຍັດ ຂອງ ພຣະ ເຈົ້າ "ສັ ກ ສິ ດ, ຊອບ ທຳ ແລະ ດີ" (ໂຣ ມ 7:12 LCV) ແລະ ເປັນ ພາ ບ ສະ ທ້ອນ ຄວາມ ສົມ ບູນ ແບບ ຂອງ ພຣະ ເຈົ້າ; ສະ ນັ້ນ, ອຸ ປະ ນິ ໄສ ທີ່ ຖືກ ຫຼໍ່ ຫຼອ ມ ຂຶ້ນ ດ້ວຍ ການ ເຊື່ອ ຟັ ງ ພຣະ ບັນ ຍັດ ນັ້ນ ກໍ ຈະ ບໍ ຣິ ສຸດ. ພຣະ ຄຣິ ສ ເປັນ ແບບ ຢ່າງ ທີ່ ສົມ ບູນ ແບບ ຂອງ ອຸ ປະ ນິ ໄສ ດັ່ງ ກ່າວ. ພຣະ ອົງ ຊົງ ກ່າວ ວ່າ: "ເຮົາ ໄດ້ ປະ ຕິ ບັດ ຕາມ ບັນ ຍັດ ຂອງ ພຣະ ບິ ດາ," "ເຮົາ ເຮັດ ສິ່ງ ທີ່ ພຣະ ອົງ ພໍ ໃຈ ສະ ເໝີ." (ໂຢ ຮັນ 15:10 NTV; 8:29 LCV). ພຣະ ຄຸ ນ ຂອງ ພຣະ ເຈົ້າ ຈະ ຊ່ວຍ ໃຫ້ ຜູ້ ຕິ ດ ຕາມ ພຣະ ຄຣິ ສ ສ້າງ ອຸ ປະ ນິ ໄສ ທີ່ ສອດ ຄ່ອງ ກັບ ຫຼັກ ການ ແຫ່ ງ ພຣະ ບັນ ຍັດ ອັນ ບໍ ຣິ ສຸດ

ຂອງພຣະອົງ ເພື່ອພວກເຂົາຈະໄດ້ກາຍເປັນເໝືອນພຣະອົງ. ນີ້ແຫຼະຄືການຊໍາລະໃຫ້ບໍຣິສຸດຕາມພຣະຄໍາພີ. {GC 469.2}

ດ້ວຍຄວາມເຊື່ອເທົ່ານັ້ນ

ວຽກງານນີ້ຈະສໍາເລັດໄດ້ ກໍດ້ວຍຄວາມເຊື່ອໃນພຣະຄຣິສເທົ່ານັ້ນ, ໂດຍຣິດອໍານາດຂອງພຣະ-ວິນຍານບໍຣິສຸດທີ່ສະຖິດຢູ່ໃນໃຈ. ອາຈານໂປໂລໄດ້ຕັກເຕືອນຜູ້ທີ່ເຊື່ອວ່າ: "ຈົ່ງບາກບັ່ນຕໍ່ໄປເພື່ອຄວາມພົ້ນຂອງພວກເຈົ້າ ດ້ວຍຄວາມຢໍາເກງ ແລະ ຕົວສັ່ນ, ເພາະວ່າແມ່ນພຣະເຈົ້າເປັນຜູ້ກະທໍາການຢູ່ພາຍໃນພວກເຈົ້າ ເພື່ອໃຫ້ພວກເຈົ້າຕັ້ງໃຈ ແລະ . . . ກະທໍາເພື່ອໃຫ້ບັນລຸຈຸດປະສົງອັນດີຂອງພຣະອົງ." (ຟີລິບປອຍ 2:12, 13 LCV). ຄຣິສຕຽນຈະຮູ້ສຶກເຖິງການຊັກຈູງຂອງຄວາມບາບ, ແຕ່ພວກເຂົາຈະຕ້ອງຕໍ່ສູ້ກັບມັນຢູ່ສະເໝີ. ຈຸດນີ້ແຫຼະ ທີ່ພວກເຮົາຕ້ອງການຄວາມຊ່ວຍເຫຼືອຈາກພຣະຄຣິສ; ຄວາມອ່ອນແອຂອງມະນຸດຈະປະສານເຂົ້າກັບພະລັງອັນຍິ່ງໃຫຍ່ຂອງພຣະເຈົ້າ ແລະ ດ້ວຍຄວາມເຊື່ອພວກເຂົາຈະປະກາດວ່າ: "ຂອບພຣະຄຸນພຣະເຈົ້າ! ພຣະອົງມອບໄຊຊະນະໃຫ້ແກ່ພວກເຮົາໂດຍທາງພຣະເຢຊູຄຣິສເຈົ້າ ອົງພຣະຜູ້ເປັນເຈົ້າຂອງພວກເຮົາ." (1 ໂກຣິນໂທ 15:57 LCV). {GC 469.3}

ພຣະຄໍາພີສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ການຊໍາລະໃຫ້ບໍຣິສຸດເປັນຂະບວນການທີ່ດໍາເນີນໄປເທື່ອລະກ້າວ. ເມື່ອຄົນບາບກັບໃຈ ແລະ ໄດ້ພົບສັນຕິສຸກກັບພຣະເຈົ້າ ໂດຍທາງພຣະໂລຫິດແຫ່ງການລຶບລ້າງຄວາມຜິດບາບ, ຊີວິດຄຣິສຕຽນຂອງເຂົາຫາກໍພຽງເລີ່ມຕົ້ນຂຶ້ນເທົ່ານັ້ນ. ບັດນີ້ເຂົາຕ້ອງ "ກ້າວໜ້າໄປເຖິງຄວາມບໍຣິບູນ" ເພື່ອຈະເຕີບໃຫຍ່ຂຶ້ນສູ່ "ຂະໜາດຄວາມສົມບູນຂອງພຣະຄຣິສເຈົ້າ." (ເຮັບເຣີ 6:1 TKJV; ເອເຟໂຊ 4:13 LCV). ອາຈານໂປໂລກ່າວວ່າ: "ເຮົາເຮັດຢ່າງໜຶ່ງຄື: ລືມສິ່ງຢູ່ເບື້ອງຫຼັງ ແລະ ເອົາໃຈໃສ່ສິ່ງທີ່ຢູ່ຂ້າງໜ້າ, ເຮົາກໍາລັງມຸ່ງໜ້າໄປສູ່ຫຼັກໄຊເພື່ອຈະໄດ້ຮັບລາງວັນ ເພາະເປັນລາງວັນທີ່ພຣະເຈົ້າໄດ້ເອີ້ນເຮົາໃຫ້ໄປຮັບຢູ່ສະຫວັນໃນພຣະຄຣິສເຈົ້າເຢຊູ." (ຟີລິບປອຍ 3:13, 14 LCV). ສ່ວນເປໂຕໄດ້ບອກພວກເຮົາເຖິງຂັ້ນຕອນທີ່ຈະນໍາໄປສູ່ການຊໍາລະໃຫ້ບໍຣິສຸດຕາມພຣະຄໍາພີວ່າ: "ພວກເຈົ້າຈົ່ງພະຍາຍາມທຸກວິທີ ທີ່ຈະເພີ່ມຄວາມດີເຂົ້າກັບຄວາມເຊື່ອຂອງພວກເຈົ້າ ແລະ ເພີ່ມຄວາມຮູ້ເຂົ້າກັບຄວາມດີ, ແລະເພີ່ມການບັງຄັບຕົນເຂົ້າກັບຄວາມຮູ້, ເພີ່ມຄວາມອົດທົນເຂົ້າກັບການບັງຄັບຕົນ, ເພີ່ມຊີວິດໃນທາງຂອງພຣະເຈົ້າເຂົ້າກັບຄວາມບາກບັ່ນ ແລະ ເພີ່ມຄວາມຮັກກັນເໝືອນພີ່ນ້ອງເຂົ້າກັບຊີວິດໃນທາງຂອງພຣະເຈົ້າ ແລະ ເພີ່ມຄວາມຮັກເຂົ້າກັບຄວາມຮັກກັນເໝືອນພີ່ນ້ອງ . . . ຖ້າພວກເຈົ້າເຮັດຢ່າງນັ້ນແລ້ວພວກເຈົ້າກໍຈະບໍ່ສະດຸດລົ້ມລົງຈັກເທື່ອ." (2 ເປໂຕ 1:5–10 LCV). {GC 470.1}

ຜູ້ທີ່ໄດ້ຮັບການຊໍາລະໃຫ້ບໍຣິສຸດຕາມພຣະຄໍາພີຈະສະແດງເຖິງຄວາມອ່ອນນ້ອມຖ່ອມຕົນ. ເໝືອນດັ່ງໂມເຊ ພວກເຂົາໄດ້ເຫັນຣັດສະໝີພາບອັນໜ້າຢ້ານກົວຂອງຄວາມບໍຣິສຸດ; ແລະເມື່ອທຽບກັບຄວາມບໍຣິສຸດ ແລະ ຄວາມສົມບູນແບບອັນສູງສຸດຂອງພຣະເຈົ້າຜູ້ຊົງຣິດທານຸພາບສູງສຸດ, ພວກເຂົາເຫັນວ່າຕົນເອງບໍ່ມີຄຸນຄ່າອັນໃດ. {GC 470.2}

ຜູ້ເຜີຍພຣະທໍາດານີເອນເປັນແບບຢ່າງຂອງການຖືກຊໍາລະໃຫ້ບໍຣິສຸດຢ່າງແທ້ຈິງ; ຊີວິດອັນຍືນຍາວຂອງເພິ່ນອຸທິດໃຫ້ແກ່ການຮັບໃຊ້ອົງພຣະຜູ້ເປັນເຈົ້າ. ເພິ່ນເປັນ "ທີ່ຮັກຢ່າງຍິ່ງ" ຂອງສະຫວັນ (ດານີເອນ 10:11 TKJV); ແຕ່ແທນທີ່ຈະອ້າງວ່າຕົນເປັນຄົນສະອາດບໍຣິສຸດ, ຜູ້ເຜີຍພຣະທໍາທີ່ໄດ້ຮັບກຽດສູງທ່ານນີ້ໄດ້ນັບຕົວເອງເຂົ້າຮ່ວມກັບຄົນທີ່ເຮັດບາບຢ່າງຮ້າຍແຮງຂອງອິດສະຣາເອນ ໃນຂະນະທີ່ເພິ່ນອ້ອນວອນຕໍ່ພຣະເຈົ້າເພື່ອປະຊາກອນຂອງເພິ່ນວ່າ: "ພວກຂ້ານ້ອຍກໍາລັງພາວັນນາອະທິຖານຫາພຣະອົງ ບໍ່ແມ່ນຍ້ອນພວກຂ້ານ້ອຍກະທໍາໃນສິ່ງທີ່ຖືກຕ້ອງ ແຕ່ຍ້ອນພຣະອົງມີຄວາມເມດຕາ." "ພວກຂ້ານ້ອຍໄດ້ເຮັດ

ບາບ ແລະ ເຮັດຜິດ.” ເພິ່ນອະທິບາຍວ່າ: “ຂ້າພະເຈົ້າໄດ້ສືບຕໍ່ກ່າວ ແລະ ພາວັນນາອະທິຖານ ໂດຍ ສາລະພາບບາບຂອງຂ້າພະເຈົ້າ ແລະ ບາບຂອງຊາວອິດສະຣາເອນປະຊາຊົນຂອງຂ້າພະເຈົ້າ.” ແລ້ວ ເມື່ອພຣະບຸດຂອງພຣະເຈົ້າສະເດັດມາປາກົດແກ່ເພິ່ນໃນພາຍຫຼັງ ເພື່ອໃຫ້ຄຳແນະນຳ, ດານີເອນກ່າວ ວ່າ: “ສ່ວນດີຂອງຂ້າພະເຈົ້າໄດ້ກາຍເປັນມົນທິນອັນເປີເປື້ອນພາຍໃນຂ້າພະເຈົ້າ ແລະ ຂ້າພະເຈົ້າບໍ່ເຫຼືອ ເຫື່ອແຮງຢູ່ເລີຍ.” (ດານີເອນ 9:18, 15, 20; 10:8 ແປຈາກສະບັບ KJV). *{GC 470.3}*

ເມື່ອທ່ານໂຢບໄດ້ຍິນສຽງຂອງພຣະເຈົ້າດັງອອກມາຈາກລົມບ້ຫມຸ, ເພິ່ນໄດ້ອຸທານອອກມາວ່າ: “ຂ້ານ້ອຍກິນແໜງຕົວເອງ ແລະ ຂ້ານ້ອຍປະໃຈເກົ່າເອົາໃຈໃໝ່ໃນຂີ້ຝຸ່ນດິນ ແລະ ໃນຂີ້ເທົ່າໄຟ.” (ໂຢບ 42:6 ສະບັບລາວບູຮານ). ເມື່ອເອຊາຢາເຫັນສະຫງ່າຣາສີຂອງພຣະຜູ້ເປັນເຈົ້າ ແລະ ໄດ້ຍິນສຽງ ພວກເຄຣຸບຮ້ອງວ່າ, “ບໍຣິສຸດ ບໍຣິສຸດ ບໍຣິສຸດ ອົງພຣະຜູ້ເປັນເຈົ້າອົງຊົງຣິດອຳນາດຍິ່ງໃຫຍ່ຊົງ ບໍຣິສຸດ,” ເພິ່ນຈຶ່ງຮ້ອງອອກມາວ່າ, “ຂ້ານ້ອຍໝົດຫວັງສາແລ້ວ ເຄາະກຳເປັນຂອງຂ້ານ້ອຍສາ ແລ້ວ.” (ເອຊາຢາ 6:3 LO2012, 5). ຫຼັງຈາກອາຈານໂປໂລຖືກຮັບຂຶ້ນໄປເຖິງສະຫວັນຊັ້ນທີ ສາມ ແລະ ໄດ້ຍິນສິ່ງທີ່ມະນຸດບໍ່ສາມາດເວົ້າອອກມາໄດ້, ເພິ່ນໄດ້ເອີ້ນຕົນເອງວ່າ: “ເຮົາເປັນຜູ້ຕ່ຳຕ້ອຍ ກວ່າຜູ້ເລັກນ້ອຍທີ່ສຸດຂອງບັນດາຄົນທັງໝົດຂອງພຣະເຈົ້າ.” (ເບິ່ງ 2 ໂກຣິນໂທ 12:2–4; ເອເຟໂຊ 3:8 LCV). ແມ່ນແຕ່ໂຢຮັນຜູ້ເປັນທີ່ຮັກແພງ, ຜູ້ທີ່ເຄີຍເອນຫົວລົງທີ່ຊວງເອິກຂອງພຣະເຢຊູ ແລະ ໄດ້ເຫັນ ສະຫງ່າຣາສີຂອງພຣະອົງ, ເພິ່ນຍັງລົ້ມລົງຄືກັບຄົນຕາຍຢູ່ທີ່ພຣະບາດຂອງພຣະອົງ. (ເບິ່ງ ພຣະນິມິດ 1:17). *{GC 471.1}*

ຄົນທີ່ດຳເນີນຊີວິດຢູ່ໃຕ້ຮົ່ມເງົາຂອງໄມ້ກາງແຂນແຫ່ງພູເຂົາຄານວາຣີ ຈະບໍ່ມີການຍົກຍ້ອງຕົນເອງ ຫຼື ການອວດອ້າງວ່າຕົນບໍ່ມີບາບ. ພວກເຂົາຮູ້ດີວ່າແມ່ນບາບຂອງພວກເຂົາເອງ ທີ່ເຮັດໃຫ້ພຣະບຸດ ຂອງພຣະເຈົ້າຕ້ອງທົນທຸກທໍລະມານ ຈົນພຣະໄທຂອງພຣະອົງແຕກສະຫຼາຍ; ຄວາມຄິດນີ້ຈະນຳ ພວກເຂົາໄປສູ່ການຖ່ອມຕົວລົງ. ຍິ່ງຜູ້ໃດຢູ່ໃກ້ຊິດພຣະເຢຊູຫຼາຍເທົ່າໃດ, ຜູ້ນັ້ນກໍຍິ່ງເຫັນຄວາມ ອ່ອນແອ ແລະ ຄວາມບາບຂອງມະນຸດຢ່າງຈະແຈ້ງເທົ່ານັ້ນ. ຄວາມຫວັງດຽວຂອງພວກເຂົາ ແມ່ນຢູ່ໃນ ຄຸນຄວາມດີຂອງພຣະຜູ້ຊ່ວຍໃຫ້ລອດ ຜູ້ຖືກຕຶງໄວ້ທີ່ໄມ້ກາງແຂນ ແລະ ໄດ້ຟື້ນຄືນພຣະຊົນ. *{GC 471.2}*

ຄຳສອນເລື່ອງການຊຳລະໃຫ້ບໍຣິສຸດທີ່ກຳລັງໄດ້ຮັບຄວາມສົນໃຈຫຼາຍໃນວົງການສາສະໜາທຸກວັນ ນີ້ ມີລັກສະນະຂອງການຍົກຍ້ອງຕົນເອງ ແລະ ການເມີນເສີຍຕໍ່ພຣະບັນຍັດຂອງພຣະເຈົ້າປະປົນ ຢູ່ນຳ ເຊິ່ງສະແດງໃຫ້ເຫັນວ່າຄຳສອນດັ່ງກ່າວບໍ່ໄດ້ມາຈາກພຣະຄຳພີ. ຜູ້ສົ່ງເສີມຄຳສອນນີ້ກ່າວ ວ່າ ການຊຳລະໃຫ້ບໍຣິສຸດເປັນວຽກງານທີ່ເກີດຂຶ້ນທັນທີ; ພວກເຂົາຈຶ່ງບັນລຸເຖິງຄວາມບໍຣິສຸດອັນສົມບູນ ໂດຍຄວາມເຊື່ອເທົ່ານັ້ນ. ພວກເຂົາເວົ້າວ່າ “ໃຫ້ເຈົ້າເຊື່ອຢ່າງດຽວກໍພໍ, ແລ້ວພຣະພອນທັງຫຼາຍຈະ ເປັນຂອງເຈົ້າ.” ໝາຍຄວາມວ່າ, ຜູ້ທີ່ຮັບເອົາພຣະພອນ ບໍ່ຈຳເປັນຕ້ອງມີຄວາມພະຍາຍາມໃດໆ ອີກ. ໃນຂະນະດຽວກັນ, ພວກເຂົາປະຕິເສດສິດອຳນາດຂອງພຣະບັນຍັດຂອງພຣະເຈົ້າ, ໂດຍອ້າງວ່າ ພວກເຂົາໄດ້ຮັບການປົດປ່ອຍຈາກພັນທະທີ່ຈະຕ້ອງຖືຮັກສາພຣະບັນຍັດ. ແຕ່ເປັນໄປໄດ້ບໍທີ່ມະນຸດຈະ ບໍຣິສຸດ, ສະທ້ອນເຖິງພຣະລັກສະນະຂອງພຣະເຈົ້າ ແລະ ເປັນທີ່ພໍພຣະໄທຂອງພຣະອົງ ໂດຍບໍ່ເຊື່ອຟັງ ພຣະບັນຍັດທີ່ສະແດງເຖິງພຣະລັກສະນະ ແລະ ນ້ຳພຣະໄທຂອງພຣະອົງ? *{GC 471.3}*

ຄຳສອນທີ່ວ່າຄວາມເຊື່ອພຽງຢ່າງດຽວກໍພໍແລ້ວນັ້ນ ເປັນຄຳສອນທີ່ມີຄົນມັກຫຼາຍ ເພາະພວກເຂົາ ຢາກໄດ້ສາສະໜາທີ່ງ່າຍໆ ທີ່ບໍ່ຕ້ອງພະຍາຍາມ, ບໍ່ຕ້ອງປະຕິເສດຕົນເອງ ແລະ ບໍ່ຕ້ອງຫັນໜີຈາກ ຄວາມໄຮ້ສາລະຂອງທາງໂລກ. ແຕ່ພຣະຄຳຂອງພຣະເຈົ້າກ່າວວ່າແນວໃດ? ອັກຄະສາວົກຢາໂກໂບກ່າວ ວ່າ: “ຖ້າຄົນໜຶ່ງອ້າງວ່າຕົນມີຄວາມເຊື່ອ ແຕ່ບໍ່ມີການປະຕິບັດ ມັນຈະມີປະໂຫຍດອັນໃດ? ຄວາມເຊື່ອ ແບບນີ້ສາມາດຊ່ວຍພວກເຂົາໃຫ້ລອດພົ້ນໄດ້ບໍ? . . . ຄົນໂງ່ເອີຍ, ພວກເຈົ້າຕ້ອງການຫຼັກຖານວ່າ ຄວາມ

ເຊື່ອທີ່ບໍ່ມີການປະຕິບັດນັ້ນ ໄຮ້ປະໂຫຍດແມ່ນບໍ? ພຣະເຈົ້າຖືວ່າ ອັບຣາຮາມບັນພະບຸລຸດຂອງພວກເຮົາ ເປັນຜູ້ຊອບທຳ ກໍຍ້ອນການປະຕິບັດຂອງເພິ່ນທີ່ໄດ້ຖວາຍອີຊາກ ລູກຊາຍຂອງເພິ່ນເທິງແທ່ນບູຊາບໍ່ແມ່ນບໍ? ພວກເຈົ້າກໍເຫັນແລ້ວວ່າຄວາມເຊື່ອ ແລະ ການປະຕິບັດຂອງເພິ່ນກໍເຮັດຄຽງຄູ່ກັນໄປ ແລະ ຄວາມເຊື່ອຂອງເພິ່ນຄົບຖ້ວນສົມບູນ ໂດຍສິ່ງທີ່ເພິ່ນໄດ້ປະຕິບັດ. . . . ພວກເຈົ້າກໍເຫັນແລ້ວວ່າ ຜູ້ທີ່ຈະຖືກນັບວ່າເປັນຜູ້ຊອບທຳ ກໍດ້ວຍການປະຕິບັດຂອງພວກເຂົາ ບໍ່ແມ່ນພຽງຄວາມເຊື່ອຢ່າງດຽວ.” (ຢາໂກໂບ 2:14–24 LCV). *{GC 472.1}*

ພຣະຄຳຂອງພຣະເຈົ້າຕໍ່ຕ້ານຄຳສອນນີ້ ທີ່ຫຼອກລວງເລື່ອງຄວາມເຊື່ອທີ່ປາສະຈາກການກະທຳ. ການທີ່ຢາກໄດ້ຄວາມໂປດປານຈາກສະຫວັນ ໂດຍບໍ່ປະຕິບັດຕາມເງື່ອນໄຂແຫ່ງພຣະກະລຸນານັ້ນ ບໍ່ແມ່ນຄວາມເຊື່ອ ແຕ່ເປັນການອວດອ້າງ, ເພາະວ່າຄວາມເຊື່ອທີ່ແທ້ຈິງມີພື້ນຖານຢູ່ໃນພຣະສັນຍາ ແລະ ຫຼັກການຂອງພຣະຄຳພີ. *{GC 472.2}*

ຢ່າໃຫ້ຜູ້ໃດຫຼອກລວງຕົວເອງວ່າ ຕົນສາມາດເປັນຄົນບໍຣິສຸດໄດ້ ໃນຂະນະທີ່ຈົງໃຈລະເມີດຂໍ້ກຳນົດຂໍ້ໃດຂໍ້ໜຶ່ງຂອງພຣະເຈົ້າ. ການເຮັດບາບທີ່ຮູ້ດີຢູ່ແລ້ວ ຈະດັບສຽງຂອງພຣະວິນຍານ ແລະ ແຍກຈິດວິນຍານອອກຈາກພຣະເຈົ້າ. “ການບາບແມ່ນການຝ່າຝືນກົດບັນຍັດ” ແລະ “ຜູ້ໃດທີ່ຍັງເຮັດບາບຕາມເຄີຍ ຜູ້ນັ້ນກໍຍັງບໍ່ເຫັນພຣະອົງ ແລະ ຍັງບໍ່ຮູ້ຈັກພຣະອົງ.” (1 ໂຢຮັນ 3:4, 6). ເຖິງແມ່ນວ່າໃນຈົດໝາຍຂອງໂຢຮັນ ເພິ່ນໄດ້ເວົ້າເຖິງຄວາມຮັກຢ່າງຫຼວງຫຼາຍກໍຕາມ, ແຕ່ເພິ່ນກໍບໍ່ລັງເລທີ່ຈະເປີດເຜີຍລັກສະນະທີ່ແທ້ຈິງຂອງຄົນເຫຼົ່ານັ້ນ ທີ່ອ້າງວ່າຕົນເປັນຄົນບໍຣິສຸດ ໃນຂະນະທີ່ຍັງລະເມີດພຣະບັນຍັດຂອງພຣະເຈົ້າຢູ່. “ຖ້າຄົນໃດເວົ້າວ່າ, ‘ຕົນຮູ້ຈັກພຣະອົງ’ ແຕ່ບໍ່ຖືຮັກສາກົດບັນຍັດຂອງພຣະອົງ ຄົນນັ້ນກໍເວົ້າຕົວະ ແລະ ຄວາມຈິງກໍບໍ່ມີຢູ່ໃນລາວ. ແຕ່ຜູ້ໃດກໍຕາມທີ່ຖືຮັກສາພຣະທຳຂອງພຣະອົງ, ຜູ້ນັ້ນແຫຼະ ທີ່ຮັກພຣະເຈົ້າຢ່າງຄົບຖ້ວນບໍຣິບູນໂດຍແທ້.” (1 ໂຢຮັນ 2:4, 5). ນີ້ແມ່ນສິ່ງທີ່ທົດສອບຄຳອ້າງຂອງທຸກຄົນກ່ຽວກັບຊີວິດຄຣິສຕຽນຂອງເຂົາ. ພວກເຮົາບໍ່ສາມາດຖືວ່າຜູ້ໃດເປັນຄົນບໍຣິສຸດໄດ້ ຖ້າບໍ່ໄດ້ວັດແທກເຂົາດ້ວຍພຣະບັນຍັດຂອງພຣະເຈົ້າ ເຊິ່ງເປັນມາດຕະຖານດ້ານຄວາມບໍຣິສຸດອັນດຽວຂອງພຣະອົງ ທັງໃນສະຫວັນ ແລະ ໃນແຜ່ນດິນໂລກ. ຖ້າຜູ້ໃດບໍ່ເຫັນຄວາມສຳຄັນຂອງກົດສິນທຳ, ຖ້າລາວເບິ່ງຂ້າມ ແລະ ດູໝິ່ນພຣະບັນຍັດຂອງພຣະເຈົ້າ, ຖ້າຜູ້ໃດລະເມີດຂໍ້ໃດຂໍ້ໜຶ່ງໃນບັນດາຂໍ້ບັນຍັດເຫຼົ່ານີ້ ແລະ ສອນຄົນອື່ນໃຫ້ເຮັດແບບດຽວກັນ, ລາວຈະບໍ່ມີຄ່າໃນສາຍຕາຂອງສະຫວັນ ແລະ ພວກເຮົາສາມາດຮູ້ໄດ້ວ່າ ການອວດອ້າງຂອງລາວນັ້ນບໍ່ມີມູນຄວາມຈິງ. *{GC 472.3}*

ການອ້າງວ່າຕົວເອງບໍ່ມີຄວາມບາບ ເປັນຫຼັກຖານຢ່າງແຈ່ມແຈ້ງວ່າ ຜູ້ທີ່ອ້າງນັ້ນຢູ່ຫ່າງໄກຈາກຄວາມບໍຣິສຸດ. ສາເຫດທີ່ເປັນຢ່າງນັ້ນ ກໍຍ້ອນວ່າເຂົາບໍ່ມີຄວາມເຂົ້າໃຈອັນແທ້ຈິງກ່ຽວກັບຄວາມບໍຣິສຸດ ຜຸດຜ່ອງ ອັນບໍ່ມີຂອບເຂດຈຳກັດຂອງພຣະເຈົ້າ ແລະ ບໍ່ເຂົ້າໃຈເຖິງການປ່ຽນແປງທີ່ມະນຸດຕ້ອງໄດ້ຮັບ ເພື່ອໃຫ້ສອດຄ່ອງກັບພຣະລັກສະນະຂອງພຣະອົງ. ເຂົາບໍ່ເຂົ້າໃຈຄວາມບໍຣິສຸດ ແລະ ຄວາມປະເສີດຂອງພຣະເຢຊູ ອີກທັງບໍ່ເຂົ້າໃຈເຖິງຄວາມຊົ່ວຮ້າຍ ແລະ ພິດໄພຂອງຄວາມບາບ ເຂົາຈຶ່ງຖືວ່າຕົນເອງບໍຣິສຸດ. ຍິ່ງເຂົາຢູ່ຫ່າງໄກຈາກພຣະຄຣິສເທົ່າໃດ ແລະ ຍິ່ງມີຄວາມເຂົ້າໃຈອັນຈຳກັດກ່ຽວກັບພຣະລັກສະນະ ແລະ ພຣະປະສົງຂອງພຣະເຈົ້າເທົ່າໃດ ເຂົາກໍຍິ່ງເບິ່ງເຫັນຕົນເອງເປັນຄົນຊອບທຳຫຼາຍຂຶ້ນເທົ່ານັ້ນ. *{GC 473.1}*

ການຊຳລະໃຫ້ບໍຣິສຸດຕາມພຣະຄຳພີ

ການຊຳລະໃຫ້ບໍຣິສຸດຕາມທີ່ກ່າວໄວ້ໃນພຣະຄຳພີກວມເອົາທຸກສ່ວນຂອງມະນຸດ ທັງຮ່າງກາຍ, ຈິດໃຈ ແລະ ຈິດວິນຍານ. ອາຈານໂປໂລ ໄດ້ອະທິຖານເພື່ອສະມາຊິກຄຣິສຕະຈັກແຫ່ງເມືອງເທສະໂລນິກ ວ່າ “ຂໍໃຫ້ທັງວິນຍານ, ຈິດໃຈ ແລະ ຮ່າງກາຍຂອງພວກເຈົ້າບໍ່ມີຕຳໜິໃນວັນທີ່ພຣະເຢຊູຄຣິສເຈົ້າ ອົງພຣະຜູ້ເປັນເຈົ້າຂອງພວກເຮົາມາ.” (1 ເທສະໂລນິກ 5:23 LCV). ເພີ່ນຍັງໄດ້ຂຽນເຖິງຜູ້ເຊື່ອໃນນະຄອນໂຣມວ່າ: “ເຫດສະນັ້ນ ພີ່ນ້ອງທັງຫຼາຍເອີຍ, ໂດຍເຫັນແກ່ພຣະເມດຕາກະລຸນາຂອງພຣະເຈົ້າ ເຮົາຈຶ່ງຮຽກຮ້ອງພວກເຈົ້າໃຫ້ຖວາຍຕົວແກ່ພຣະເຈົ້າ ເປັນເຄື່ອງບູຊາອັນມີຊີວິດ, ເປັນອັນບໍຣິສຸດ ແລະ ເປັນທີ່ພໍພຣະໄທພຣະເຈົ້າ” (ໂຣມ 12:1). ໃນສະໄໝຂອງຊົນຊາດອິດສະຣາເອນບູຮານ, ເຄື່ອງຖວາຍບູຊາທຸກຢ່າງທີ່ນຳມາຖວາຍແດ່ພຣະເຈົ້າ ຕ້ອງຖືກກວດກາຢ່າງລະມັດລະວັງ. ຖ້າພົບຄວາມບົກຜ່ອງໃດ ໆ ໃນສັດທີ່ນຳມາຖວາຍ, ມັນກໍຈະຖືກປະຕິເສດ ເພາະພຣະເຈົ້າໄດ້ສັ່ງໄວ້ວ່າເຄື່ອງຖວາຍບູຊານັ້ນຈະຕ້ອງ “ບໍ່ມີຕຳໜິ” (ເບິ່ງ ລະບຽບພວກເລວີ 1:3). ເຊັ່ນດຽວກັນ, ຄຣິສຕຽນຖືກສັ່ງໃຫ້ຖວາຍຮ່າງກາຍຂອງຕົນເປັນ “ເຄື່ອງບູຊາອັນມີຊີວິດ, ເປັນອັນບໍຣິສຸດ ແລະ ເປັນທີ່ພໍພຣະໄທພຣະເຈົ້າ.” ເພື່ອເຮັດໄດ້ແນວນີ້, ພວກເຂົາຕ້ອງຮັກສາຄວາມສາມາດທຸກຢ່າງຂອງຕົນໃຫ້ຢູ່ໃນສະພາບທີ່ດີທີ່ສຸດເທົ່າທີ່ຈະເປັນໄປໄດ້. ທຸກການກະທຳທີ່ເຮັດໃຫ້ກຳລັງກາຍ ຫຼື ກຳລັງຄວາມຄິດອ່ອນແອລົງນັ້ນ ເຮັດໃຫ້ມະນຸດບໍ່ສາມາດຮັບໃຊ້ພຣະຜູ້ສ້າງຂອງຕົນໄດ້ຢ່າງສົມຄວນ. ພຣະເຈົ້າຈະພໍພຣະໄທບໍ ຖ້າພວກເຮົາບໍ່ຖວາຍສິ່ງທີ່ດີທີ່ສຸດ? ພຣະຄຣິສຊົງກ່າວວ່າ: “ຈົ່ງຮັກອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ ດ້ວຍສຸດໃຈ . . . ຂອງພວກເຈົ້າ.” (ມັດທາຍ 22:37 LCV). ຜູ້ທີ່ຮັກພຣະເຈົ້າດ້ວຍສຸດໃຈຈະປາຖະໜາຖວາຍການຮັບໃຊ້ທີ່ດີທີ່ສຸດແດ່ພຣະອົງ. ພວກເຂົາຈະພະຍາຍາມຢູ່ສະເໝີ ໃຫ້ຄວາມສາມາດທຸກຢ່າງຂອງຕົນສອດຄ່ອງກັບກົດເກນທັງຫຼາຍຂອງພຣະເຈົ້າ ເພື່ອຈະໄດ້ເຮັດຕາມນ້ຳພຣະໄທຂອງພຣະອົງໃຫ້ດີຂຶ້ນ. ພວກເຂົາຈະບໍ່ປ່ອຍໃຫ້ຄວາມຢາກຝ່າຍເນື້ອໜັງເຮັດໃຫ້ການຖວາຍຊີວິດຮັບໃຊ້ອົງພຣະບິດາມີຕຳໜິ ຫຼື ເປັນມົນທິນ. *{GC 473.2}*

ເປໂຕກ່າວວ່າ: “ຈົ່ງລະເວັ້ນຈາກຄວາມປາຖະໜາຊົ່ວ ເຊິ່ງຕໍ່ສູ້ກັບຈິດວິນຍານຂອງພວກເຈົ້າ.” (1 ເປໂຕ 2:11 LCV). ທຸກຄັ້ງທີ່ປ່ອຍຕົວໄປຕາມຄວາມບາບຈະເຮັດໃຫ້ຄວາມຄິດມືນຊາ ແລະ ເຮັດໃຫ້ການຮັບຮູ້ທາງຈິດໃຈ ແລະ ຈິດວິນຍານອ່ອນແອລົງ. ສິ່ງນີ້ສົ່ງຜົນໃຫ້ພຣະຄຳ ແລະ ພຣະວິນຍານຂອງພຣະເຈົ້າ ບໍ່ສາມາດເຂົ້າເຖິງຈິດໃຈຂອງພວກເຂົາໄດ້ເທົ່າທີ່ຄວນ. ອາຈານໂປໂລຂຽນເຖິງພີ່ນ້ອງໃນເມືອງໂກຣິນໂທວ່າ: “ຂໍໃຫ້ພວກເຮົາຊຳລະຕົນເອງຈາກທຸກສິ່ງທີ່ເຮັດໃຫ້ຮ່າງກາຍ ແລະ ຈິດວິນຍານເປື້ອນເປິ, ຈົ່ງເຮັດໃຫ້ຄວາມບໍຣິສຸດສົມບູນປາກົດອອກມາຈາກຄວາມຢຳເກງພຣະເຈົ້າ.” (2 ໂກຣິນໂທ 7:1 LCV). ເມື່ອເພີ່ນກ່າວເຖິງຜົນຂອງພຣະວິນຍານ ຄື “ຄວາມຮັກ, ຄວາມຊື່ນຊົມຍິນດີ, ສັນຕິສຸກ, ຄວາມອົດທົນ, ຄວາມປານີ, ຄວາມດີ, ຄວາມສັດຊື່, ຄວາມສຸພາບອ່ອນຫວານ” ເພີ່ນຍັງລວມເອົາ “ການຄວບຄຸມຕົນເອງ” ເຂົ້ານຳ. (ຄາລາເຕຍ 5:22, 23). *{GC 474.1}*

ເຖິງແມ່ນວ່າ ມີຄຳສອນເຫຼົ່ານີ້ໃນພຣະຄຳພີກໍຕາມ, ແຕ່ມີຫຼາຍຄົນທີ່ອ້າງຕົນເປັນຄຣິສຕຽນພວມເຮັດໃຫ້ຕົນເອງອ່ອນແອລົງ ຍ້ອນການຫຼົງໄຫຼຫາຜົນກຳໄລ ຫຼື ການນິຍົມແຟຊັ່ນ; ຫຼາຍຄົນກຳລັງເຮັດໃຫ້ພາບລັກຂອງພຣະເຈົ້າໃນຕົວເອງ ມົວໝອງລົງຍ້ອນການກິນດື່ມມົວເມົາ ແລະ ຄວາມມ່ວນຊື່ນທີ່ຜິດສິນທຳ. ຄົນໃນຄຣິສຕະຈັກບໍ່ພຽງແຕ່ບໍ່ໄດ້ຕຳໜິສິ່ງເຫຼົ່ານີ້ເທົ່ານັ້ນ, ແຕ່ຍັງສົ່ງເສີມຄວາມຊົ່ວ ດ້ວຍການຫາເງິນເຂົ້າຄັງຂອງຄຣິສຕະຈັກໃນວິທີທີ່ຜິດເຊັ່ນ: ຍົວະໃຫ້ມີການກິນດື່ມ, ໃຫ້ຫວັງໃນຜົນກຳໄລ ແລະ ຫາຄວາມມ່ວນຊື່ນ; ສາເຫດທີ່ເຮັດຢ່າງນີ້ກໍເພາະວ່າ ຄວາມຮັກທີ່ມີຕໍ່ພຣະຄຣິສນັ້ນບໍ່

ພຽງພໍທີ່ຈະໃຫ້ຄົນບໍລິຈາກເງິນ. ຖ້າພຣະເຢຊູສະເດັດມາຍັງໂບດຕ່າງ ໆ ໃນທຸກມື້ນີ້ ແລະ ເຫັນການກິນລ້ຽງ ແລະ ການຄ້າຂາຍອັນບໍ່ບໍຣິສຸດທີ່ກຳລັງດຳເນີນຢູ່ໃນນາມຂອງສາສະໜາ, ພຣະອົງຄົງຈະຂັບໄລ່ຜູ້ທີ່ເຮັດໃຫ້ບ່ອນສັກສິດເປັນມົນທິນອອກໄປ ເໝືອນດັ່ງທີ່ພຣະອົງຊົງຂັບໄລ່ພວກແລກປ່ຽນເງິນອອກຈາກພຣະວິຫານ. *{GC 474.2}*

ອັກຄະສາວົກຢາໂກໂບກ່າວວ່າ: “ສະຕິປັນຍາທີ່ມາຈາກສະຫວັນ ກ່ອນອື່ນໝົດນັ້ນຄືບໍຣິສຸດ.” (ຢາໂກໂບ 3:17 LCV). ຖ້າເພິ່ນໄດ້ພົບກັບຜູ້ທີ່ອ້າງພຣະນາມອັນປະເສີດຂອງພຣະເຢຊູດ້ວຍປາກທີ່ເປື້ອນຢາສູບ, ຜູ້ທີ່ມີກິ່ນປາກ ແລະ ກິ່ນຕົວຂອງຢາສູບ, ຜູ້ທີ່ເຮັດໃຫ້ອາກາດບໍຣິສຸດເປັນພິດ ແລະ ບັງຄັບໃຫ້ທຸກຄົນອ້ອມຂ້າງຕ້ອງສູດດົມສານພິດນັ້ນ; ຖ້າອັກຄະສາວົກຢາໂກໂບ ໄດ້ປະເຊີນກັບການປະພຶດທີ່ຂັດແຍ້ງກັບຄວາມບໍຣິສຸດຂອງຂ່າວປະເສີດເຊັ່ນນີ້, ເພິ່ນກໍຄົງປະນາມການສູບຢາວ່າມັນ “ເປັນຂອງຝ່າຍໂລກ, ບໍ່ຢູ່ຝ່າຍວິນຍານ ແລະ ເປັນຂອງຝ່າຍມານ.” ຄົນທີ່ເປັນທາດຂອງຢາສູບ ແລະ ອ້າງວ່າຕົນໄດ້ຮັບການຊຳລະໃຫ້ບໍຣິສຸດຢ່າງສົມບູນ ກໍເວົ້າດ້ວຍຄວາມຫວັງວ່າຈະໄດ້ຂຶ້ນສະຫວັນ, ແຕ່ພຣະຄຳຂອງພຣະເຈົ້າຂຽນໄວ້ຢ່າງຈະແຈ້ງວ່າ “ບໍ່ມີສິ່ງທີ່ເປັນມົນທິນ . . . ຈະເຂົ້າໃນນະຄອນນີ້ໄດ້ເລີຍ.” (ພຣະນິມິດ 21:27 LCV). *{GC 474.3}*

“ພວກເຈົ້າບໍ່ຮູ້ບໍວ່າ ຮ່າງກາຍຂອງພວກເຈົ້າເປັນວິຫານຂອງພຣະວິນຍານບໍຣິສຸດຜູ້ສະຖິດຢູ່ໃນພວກເຈົ້າ ເຊິ່ງພວກເຈົ້າໄດ້ຮັບຈາກພຣະເຈົ້າ? ພວກເຈົ້າບໍ່ແມ່ນເຈົ້າຂອງຕົວເຈົ້າເອງ; ພຣະເຈົ້າຊົງຊື້ພວກເຈົ້າໄວ້ແລ້ວຕາມລາຄາ. ເຫດສະນັ້ນ, ຈົ່ງຖວາຍກຽດແດ່ພຣະເຈົ້າດ້ວຍຮ່າງກາຍ ແລະ ຈິດວິນຍານຂອງພວກເຈົ້າ ເຊິ່ງເປັນຂອງພຣະເຈົ້າ.” (1 ໂກຣິນໂທ 6:19, 20 ດັດແປງຈາກສະບັບ TKJV). ຜູ້ທີ່ມີຮ່າງກາຍເປັນວິຫານຂອງພຣະວິນຍານບໍຣິສຸດ ຈະບໍ່ຕົກເປັນທາດຂອງນິໄສອັນຊົ່ວຮ້າຍ. ກຳລັງຄວາມສາມາດຂອງເຂົາເປັນຂອງພຣະຄຣິສ ຜູ້ຊົງໄຖ່ເຂົາດ້ວຍພຣະໂລຫິດຂອງພຣະອົງ. ຊັບສິນຂອງເຂົາເປັນຂອງພຣະອົງ. ເຂົາຈະມີຄວາມຜິດຢ່າງແນ່ນອນ ຖ້າເຂົາສູນເສຍທຶນຮອນທີ່ພຣະເຈົ້າຊົງມອບໝາຍໃຫ້. ໃນແຕ່ລະປີ, ມີຄົນທີ່ອ້າງຕົນເປັນຄຣິສຕຽນ ແຕ່ກັບໃຊ້ເງິນຈຳນວນມະຫາສານໄປກັບສິ່ງທີ່ບໍ່ມີປະໂຫຍດ ແລະ ເປັນໂທດ, ໃນຂະນະທີ່ມີຄົນຈຳນວນຫຼວງຫຼາຍກຳລັງພິນາດຍ້ອນຂາດພຣະຄຳແຫ່ງຊີວິດ. ພວກເຂົາສໍ້ໂກງພຣະເຈົ້າ ໂດຍການບໍ່ຖວາຍສິບລົດ ແລະ ເງິນຖວາຍອື່ນ ໆ, ແຕ່ພັດຜານເງິນເພື່ອຕອບສະໜອງກິເລດຕັນຫາທີ່ທຳລາຍຫຼາຍກວ່າການໃຫ້ທານເພື່ອຊ່ວຍເຫຼືອຄົນທຸກຍາກ ຫຼື ເພື່ອສະໜັບສະໜູນການປະກາດຂ່າວປະເສີດ. ຖ້າທຸກຄົນທີ່ອ້າງວ່າເປັນຜູ້ຕິດຕາມພຣະຄຣິສ ໄດ້ຮັບການຊຳລະໃຫ້ບໍຣິສຸດຢ່າງແທ້ຈິງ, ແທນທີ່ຈະໃຊ້ເງິນໄປກັບສິ່ງທີ່ບໍ່ຈຳເປັນ ແລະ ສິ່ງທີ່ໃຫ້ໂທດ ພວກເຂົາຈະມອບຖວາຍໃຫ້ແກ່ຄັງຂອງອົງພຣະຜູ້ເປັນເຈົ້າ. ຖ້າເປັນດັ່ງນັ້ນ, ຄຣິສຕຽນຈະເປັນແບບຢ່າງໃນການຮູ້ຈັກປະມານຕົນ, ການປະຕິເສດຕົນເອງ ແລະ ການເສຍສະຫຼະ. ເມື່ອນັ້ນພວກເຂົາຈະເປັນແສງສະຫວ່າງໃຫ້ແກ່ໂລກ. *{GC 475.1}*

ໂລກນີ້ມົວເມົາຢູ່ກັບການເຮັດຕາມໃຈຕົນເອງ. “ຕັນຫາຂອງເນື້ອໜັງ, ຕັນຫາຂອງຕາ ແລະ ຄວາມອວດອົ່ງຂອງຊີວິດ” ກຳລັງຄອບງຳຄົນສ່ວນຫຼາຍ. (1 ໂຢຮັນ 2:16 LCV). ແຕ່ຜູ້ຕິດຕາມພຣະຄຣິສໄດ້ຮັບການຊົງຮຽກເອີ້ນທີ່ສູງສົ່ງກວ່ານັ້ນ. “ອົງພຣະຜູ້ເປັນເຈົ້າກ່າວວ່າ, ຈົ່ງອອກມາ ແລະ ແຍກອອກຈາກພວກເຂົາ. ຢ່າແຕະຕ້ອງສິ່ງທີ່ເປັນມົນທິນ.” (2 ໂກຣິນໂທ 6:17 LCV). ອີງຕາມພຣະຄຳຂອງພຣະເຈົ້າ ການຊຳລະໃຫ້ບໍຣິສຸດຈະເປັນຂອງແທ້ໄດ້ ກໍຕໍ່ເມື່ອເຮົາຕັດຂາດຈາກການຫຼົງລະເລີງໃນທາງບາບ ແລະ ຄວາມສຸກຝ່າຍໂລກເທົ່ານັ້ນ. *{GC 475.2}*

ການເຂົ້າເຝົ້າພຣະເຈົ້າໂດຍກົງ

ສຳລັບຜູ້ທີ່ເຮັດຕາມເງື່ອນໄຂທີ່ວ່າ “ຈົ່ງອອກມາ ແລະ ແຍກອອກຈາກພວກເຂົາ, ຢ່າແຕະຕ້ອງສິ່ງທີ່ເປັນມົນທິນ” ນັ້ນ, ພຣະເຈົ້າຊົງສັນຍາວ່າ: “‘ເຮົາຈຶ່ງຈະຮັບເອົາພວກເຈົ້າໄວ້. ເຮົາຈະເປັນບິດາຂອງພວກເຈົ້າ ແລ້ວພວກເຈົ້າຈະເປັນບຸດຊາຍ ບຸດຍິງຂອງເຮົາ.’ ອົງພຣະຜູ້ເປັນເຈົ້າ ອົງຊົງຣິດອຳນາດຍິ່ງໃຫຍ່ໄດ້ຊົງກ່າວໄວ້ດັ່ງນັ້ນ.” (2 ໂກຣິນໂທ 6:17, 18). ຄຣິສຕຽນທຸກຄົນມີທັງສິດທິພິເສດ ແລະ ໜ້າທີ່ໃນການມີຄວາມສຳພັນອັນເລິກເຊິ່ງກັບພຣະເຈົ້າ. ພຣະເຢຊູຊົງກ່າວວ່າ: “ເຮົານີ້ແຫຼະ ເປັນຄວາມສະຫວ່າງຂອງໂລກ. ຜູ້ໃດກໍຕາມທີ່ຕາມເຮົາມາ ຈະບໍ່ເດີນໃນຄວາມມືດ, ແຕ່ຈະມີຄວາມສະຫວ່າງແຫ່ງຊີວິດ.” (ໂຢຮັນ 8:12 LCV). “ທາງຂອງຄົນຊອບທຳເດີນໄປນັ້ນ ເປັນດັ່ງຕາເວັນຂຶ້ນໃນຍາມເຊົ້າ ໂດຍສ່ອງແສງເຫຼື້ອມໃສຂຶ້ນໄປຈົນກວ່າກາງເວັນມາຮອດ.” (ສຸພາສິດ 4:18). ພຣະເຢຊູຊົງເປັນຄວາມສະຫວ່າງຂອງໂລກ; ທຸກບາດກ້າວແຫ່ງຄວາມເຊື່ອ ແລະ ການເຊື່ອຟັງ ນຳໃຫ້ຈິດວິນຍານເຂົ້າໃກ້ພຣະອົງຫຼາຍຂຶ້ນ, ເຊິ່ງໃນພຣະອົງບໍ່ມີຄວາມມືດໃດ ໆ ເລີຍ. ຣັດສະໝີອັນຮຸ່ງເຮືອງຂອງ “ດວງຕາເວັນແຫ່ງຄວາມຊອບທຳ”[1] ສ່ອງແສງມາເທິງຜູ້ຮັບໃຊ້ຂອງພຣະເຈົ້າ ແລະ ພວກເຂົາຕ້ອງສະທ້ອນແສງນັ້ນອອກໄປ. ດາວເຄາະທັງຫຼາຍສະທ້ອນແສງຂອງດວງອາທິດສັນໃດ, ຄຣິສຕຽນກໍຕ້ອງສະແດງໃຫ້ເຫັນວ່າ ມີພຣະເຈົ້າຜູ້ປະທັບເທິງບັນລັງແຫ່ງຈັກກະວານສັນນັ້ນ, ພຣະລັກສະນະຂອງພຣະອົງສົມຄວນແກ່ການສັນລະເສີນ ແລະ ການເອົາເປັນແບບຢ່າງ. ຜູ້ທີ່ເປັນພະຍານເພື່ອພຣະອົງ ຈະສະແດງໃຫ້ເຫັນພຣະຄຸນຂອງພຣະວິນຍານ ແລະ ຄວາມສະອາດບໍຣິສຸດແຫ່ງພຣະລັກສະນະຂອງພຣະອົງ. *{GC 475.3}*

ໃນຈົດໝາຍທີ່ອາຈານໂປໂລຂຽນເຖິງຄຣິສຕະຈັກໃນເມືອງໂກໂລຊາຍ, ເພິ່ນໄດ້ກ່າວເຖິງພຣະພອນອັນອຸດົມສົມບູນທີ່ພຣະເຈົ້າຊົງມອບໃຫ້ແກ່ລູກຂອງພຣະອົງ ໂດຍກ່າວວ່າ: “ພວກເຮົາຈຶ່ງໄດ້ພາວັນນາອະທິຖານເພື່ອພວກເຈົ້າສະເໝີ ພວກເຮົາທູນຂໍພຣະເຈົ້າ ໂຜດໃຫ້ພວກເຈົ້າມີຄວາມຮອບຮູ້ເຖິງນ້ຳພຣະໄທຂອງພຣະອົງ ໃນພຣະປັນຍາກັບຄວາມເຂົ້າໃຈທຸກຢ່າງ ເຊິ່ງມາຈາກພຣະວິນຍານ. ເພື່ອພວກເຈົ້າຈະໄດ້ດຳເນີນຊີວິດຕາມທີ່ສົມຄວນໃນອົງພຣະຜູ້ເປັນເຈົ້າ ແລະ ເປັນທີ່ພໍພຣະໄທພຣະອົງຢ່າງແທ້ຈິງ, ໃຫ້ພວກເຈົ້າເກີດຜົນໃນການດີທຸກຢ່າງ ແລະ ຈະເລີນຂຶ້ນໃນຄວາມຮູ້ເຖິງພຣະເຈົ້າ. ຂໍໃຫ້ພວກເຈົ້າມີກຳລັງເຂັ້ມແຂງຂຶ້ນທຸກຢ່າງ ໂດຍຣິດອຳນາດອັນຮຸ່ງເຮືອງຂອງພຣະອົງ, ເພື່ອວ່າພວກເຈົ້າຈະສາມາດອົດທົນຕໍ່ທຸກສິ່ງໄດ້ ແລະ ມີຄວາມໝັ້ນພຽນດ້ວຍຄວາມຍິນດີ.” (ໂກໂລຊາຍ 1:9–11). *{GC 476.1}*

ນອກຈາກນັ້ນ, ເພິ່ນຍັງໄດ້ຂຽນເຖິງຄວາມປາຖະໜາທີ່ຢາກໃຫ້ພີ່ນ້ອງຊາວເອເຟໂຊເຂົ້າໃຈເຖິງສິດທິພິເສດອັນສູງສົ່ງຂອງຄຣິສຕຽນ. ເພິ່ນໄດ້ເປີດເຜີຍຕໍ່ພວກເຂົາດ້ວຍຖ້ອຍຄຳທີ່ຄົບຖ້ວນສົມບູນທີ່ສຸດກ່ຽວກັບຣິດອຳນາດ ແລະ ຄວາມຮູ້ອັນປະເສີດ ທີ່ພວກເຂົາອາດມີໄດ້ໃນຖານະລູກຊາຍລູກຍິງຂອງພຣະເຈົ້າຜູ້ສູງສຸດ. ເປັນສິດທິຂອງພວກເຂົາທີ່ຈະ “ເຂັ້ມແຂງຂຶ້ນ ດ້ວຍຣິດອຳນາດຜ່ານທາງພຣະວິນຍານຂອງພຣະອົງທີ່ຢູ່ພາຍໃນ” ທັງ “ວາງຮາກລົງ ແລະ ຕັ້ງໝັ້ນຄົງໃນຄວາມຮັກ” ໃຫ້ມີ “ຣິດອຳນາດ ພ້ອມກັບຄົນບໍຣິສຸດທັງປວງຂອງອົງພຣະຜູ້ເປັນເຈົ້າ” ທີ່ຈະສາມາດ “ເຂົ້າໃຈເຖິງຄວາມກວ້າງ, ຄວາມຍາວ, ຄວາມສູງ ແລະ ຄວາມເລິກຂອງຄວາມຮັກຂອງພຣະຄຣິສເຈົ້າ ແລະ ຮູ້ຈັກຄວາມຮັກນີ້ທີ່ເກີນຄວາມຮູ້.” ຢ່າງໃດກໍຕາມ, ເພິ່ນໄດ້ສະແດງເຖິງສິດທິພິເສດອັນຍິ່ງໃຫຍ່ທີ່ສຸດຂອງຄຣິສຕຽນ ເມື່ອ

[1] ໝາຍເຖິງພຣະຄຣິສ.

ເພີ່ນທູນຂໍໃຫ້ພວກເຂົາໄດ້ຮັບຄວາມ “ເຕັມຂະໜາດຂອງຄວາມສົມບູນທັງໝົດຂອງພຣະເຈົ້າ.” (ເອເຟໂຊ 3:16–19 LCV). {GC 476.2}

ພຣະເຈົ້າຊົງເປີດເຜີຍໃຫ້ເຫັນວ່າ ຖ້າພວກເຮົາເຊື່ອໃນພຣະສັນຍາຂອງພຣະບິດາເທິງສະຫວັນ ແລະ ເຊື່ອຟັງຕາມຂໍ້ກຳນົດຂອງພຣະອົງ, ພວກເຮົາກໍສາມາດບັນລຸເຖິງຄວາມສຳເລັດອັນສູງສຸດໄດ້. ຄຸນຄວາມດີຂອງພຣະຄຣິສເປີດທາງໃຫ້ພວກເຮົາສາມາດເຂົ້າເຝົ້າພຣະເຈົ້າຜູ້ຊົງຣິດທານຸພາບສູງສຸດ. “ພຣະອົງຜູ້ບໍ່ໄດ້ຫວງພຣະບຸດອົງດຽວຂອງພຣະອົງ ແຕ່ໄດ້ມອບພຣະບຸດນັ້ນໃຫ້ແກ່ພວກເຮົາທຸກຄົນ, ຖ້າເປັນຢ່າງນັ້ນ ພຣະອົງຈະບໍ່ເມດຕາໃຫ້ທຸກສິ່ງແກ່ພວກເຮົາພ້ອມກັບພຣະບຸດນັ້ນບໍ?” (ໂຣມ 8:32 LCV). ພຣະບິດາໄດ້ປະທານພຣະວິນຍານຂອງພຣະອົງແກ່ພຣະບຸດຢ່າງບໍ່ຈຳກັດ, ແລະພວກເຮົາກໍສາມາດຮັບພຣະວິນຍານຢ່າງບໍ່ຈຳກັດເຊັ່ນກັນ. ພຣະເຢຊູຊົງກ່າວວ່າ “ເຖິງແມ່ນວ່າພວກເຈົ້າຜູ້ເປັນຄົນຊົ່ວຍັງຮູ້ຈັກເອົາຂອງດີໃຫ້ແກ່ລູກຂອງຕົນ, ພຣະບິດາເຈົ້າຂອງພວກເຈົ້າໃນສະຫວັນ ຈະໃຫ້ພຣະວິນຍານບໍຣິສຸດເຈົ້າແກ່ບັນດາຜູ້ທີ່ຂໍຈາກພຣະອົງຫຼາຍກວ່ານັ້ນຈັກເທົ່າໃດ!” (ລູກາ 11:13 LCV). “ຖ້າພວກເຈົ້າຂໍສິ່ງໃດໃນນາມຂອງເຮົາ . . . ເຮົາກໍຈະເຮັດສິ່ງນັ້ນ.” “ຈົ່ງຂໍແລ້ວພວກເຈົ້າຈະໄດ້ຮັບ ແລະ ຄວາມຊື່ນຊົມຍິນດີຂອງພວກເຈົ້າຈະເຕັມບໍຣິບູນ.” (ໂຢຮັນ 14:14 LCV; 16:24 LCV). {GC 477.1}

ຄຣິສຕຽນຄວນດຳລົງຊີວິດດ້ວຍຄວາມນອບນ້ອມຖ່ອມຕົນ; ແຕ່ໃນຂະນະດຽວກັນ, ບໍ່ຄວນໂສກເສົ້າ ຫຼື ຕຳໜິຕົນເອງຢູ່ຕະຫຼອດເວລາ. ທຸກຄົນມີສິດທິພິເສດ ທີ່ຈະດຳລົງຊີວິດໃນແບບທີ່ພຣະເຈົ້າພໍພຣະໄທ ແລະ ອວຍພອນ. ບໍ່ແມ່ນພຣະປະສົງຂອງພຣະບິດາເທິງສະຫວັນ ທີ່ຈະໃຫ້ພວກເຮົາຮູ້ສຶກວ່າຖືກກ່າວໂທດ ແລະ ຢູ່ພາຍໃຕ້ຄວາມມືດມົນຢູ່ຕະຫຼອດເວລາ. ການຍ່າງກົ້ມຫົວ ແລະ ຈິດໃຈທີ່ຈົດຈໍ່ແຕ່ກັບຕົນເອງ ບໍ່ໄດ້ສະແດງເຖິງຄວາມຖ່ອມຕົວທີ່ແທ້ຈິງ. ພວກເຮົາສາມາດໄປຫາພຣະເຢຊູ ແລະ ຮັບການຊຳລະໃຫ້ສະອາດ, ແລ້ວຢືນຢູ່ຕໍ່ໜ້າພຣະບັນຍັດໂດຍບໍ່ມີຄວາມອັບອາຍ ຫຼື ຄວາມເສົ້າເສຍໃຈ. “ເຫດສະນັ້ນ, ບັດນີ້ການປັບໂທດຈຶ່ງບໍ່ມີແກ່ຄົນທັງຫຼາຍທີ່ຢູ່ໃນພຣະເຢຊູຄຣິສ ຜູ້ບໍ່ດຳເນີນຕາມຝ່າຍເນື້ອໜັງ ແຕ່ຕາມຝ່າຍພຣະວິນຍານ.” (ໂຣມ 8:1 TKJV). {GC 477.2}

ໂດຍຜ່ານພຣະເຢຊູ ລູກຫຼານຂອງອາດາມທີ່ຕົກຢູ່ໃນຄວາມບາບໄດ້ກາຍເປັນ “ລູກຂອງພຣະເຈົ້າ.” (1 ໂຢຮັນ 3:1 LCV). “ທັງພຣະອົງຜູ້ທີ່ເຮັດໃຫ້ມະນຸດທັງຫຼາຍບໍຣິສຸດ ກັບບັນດາຜູ້ທີ່ພຣະອົງເຮັດໃຫ້ບໍຣິສຸດນັ້ນ ເປັນຄອບຄົວດຽວກັນ. ດັ່ງນັ້ນ, ພຣະເຢຊູເຈົ້າຈຶ່ງບໍ່ລະອາຍທີ່ຈະເອີ້ນພວກເຂົາເຫຼົ່ານັ້ນວ່າພີ່ນ້ອງ.” (ເຮັບເຣີ 2:11 LCV). ຊີວິດຄຣິສຕຽນຄວນເປັນຊີວິດທີ່ເຕັມໄປດ້ວຍຄວາມເຊື່ອ, ໄຊຊະນະ ແລະ ຄວາມຊື່ນຊົມຍິນດີໃນພຣະເຈົ້າ. “ເພາະທຸກຄົນທີ່ເກີດຈາກພຣະເຈົ້າ ກໍມີໄຊຕໍ່ໂລກ ແລະ ຄວາມເຊື່ອຂອງພວກເຮົານີ້ແຫຼະ ເປັນໄຊຊະນະທີ່ຊະນະຕໍ່ໂລກ.” (1 ໂຢຮັນ 5:4). ເນເຫມີຢາ ຜູ້ຮັບໃຊ້ຂອງພຣະເຈົ້າ ໄດ້ກ່າວຄວາມຈິງຢ່າງຖືກຕ້ອງວ່າ: “*ຄວາມຊື່ນບານ*ໃນອົງພຣະຜູ້ເປັນເຈົ້າເປັນກຳລັງຂອງທ່ານ.” (ເນເຫມີຢາ 8:10 TNCV). ສ່ວນອາຈານໂປໂລກ່າວວ່າ: “ຈົ່ງຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າທຸກເວລາ ເຮົາຂໍຢ້ຳອີກວ່າ ຈົ່ງຊົມຊື່ນຍິນດີເທີ້ນ.” “ຈົ່ງຊົມຊື່ນຍິນດີຢູ່ສະເໝີ, ຈົ່ງອະທິຖານຢູ່ບໍ່ຂາດ, ຈົ່ງໂມທະນາຂອບພຣະຄຸນໃນທຸກສະຖານະການ ເພາະນີ້ຄືຄວາມປະສົງຂອງພຣະເຈົ້າສຳລັບພວກເຈົ້າທັງຫຼາຍໃນພຣະຄຣິສເຈົ້າເຢຊູ.” (ຟີລິບປອຍ 4:4; 1 ເທສະໂລນີກ 5:16–18 LCV). {GC 477.3}

ນີ້ຄືໝາກຜົນຂອງການຖິ້ມໃຈເກົ່າເອົາໃຈໃໝ່ ແລະ ການຊຳລະໃຫ້ບໍຣິສຸດຕາມພຣະຄຳພີ. ເນື່ອງຈາກວົງການຄຣິສຕຽນບໍ່ເອົາໃຈໃສ່ຕໍ່ຫຼັກການອັນຍິ່ງໃຫຍ່ແຫ່ງຄວາມຊອບທຳທີ່ຢູ່ໃນພຣະບັນຍັດຂອງພຣະ-ເຈົ້າ, ໝາກຜົນເຫຼົ່ານີ້ຈຶ່ງຫາເຫັນໄດ້ຍາກ. ນີ້ເປັນເຫດຜົນທີ່ພວກເຮົາບໍ່ຄ່ອຍໄດ້ເຫັນວຽກງານອັນ

ເລິກເຊິ່ງ ແລະ ຍືນຍົງຂອງພຣະວິນຍານບໍຣິສຸດ ເໝືອນດັ່ງທີ່ເຄີຍປາກົດໃນການຟື້ນຟູເມື່ອສະໄໝກ່ອນ. *{GC 478.1}*

ຄົນເຮົາຖືກປ່ຽນແປງໄປຕາມສິ່ງທີ່ເຮົາເຝົ້າເບິ່ງ. ບໍ່ເປັນທີ່ໜ້າແປກໃຈທີ່ຊີວິດຝ່າຍວິນຍານໃນຄຣິສ-ຕະຈັກເສື່ອມຖອຍລົງ ເມື່ອຄົນປະຖິ້ມພຣະບັນຍັດອັນສັກສິດທີ່ພຣະເຈົ້າຊົງໃຊ້ເພື່ອເປີດເຜີຍພຣະ-ລັກສະນະອັນດີພ້ອມ ແລະ ບໍຣິສຸດຂອງພຣະອົງ ແລ້ວຫັນໄປສົນໃຈຄຳສອນ ແລະ ແນວຄິດຂອງ ມະນຸດແທນ. ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: “ພວກເຂົາໄດ້ຫັນໜີໄປຈາກເຮົາ ຜູ້ເປັນບໍ່ນ້ຳພຸແຫ່ງ ຊີວິດ ແລະ ພວກເຂົາໄດ້ຂຸດອ່າງນ້ຳໄວ້ສຳລັບຕົນເອງ ເປັນອ່າງແຕກທີ່ບັນຈຸນ້ຳໄວ້ບໍ່ໄດ້.” (ເຢເຣມີຢາ 2:13). *{GC 478.2}*

“ຄວາມສຸກເປັນຂອງບຸກຄົນຜູ້ທີ່ບໍ່ເຮັດຕາມຄຳແນະນຳຂອງຄົນຊົ່ວຮ້າຍ . . . ແຕ່ພວກເຂົາພົບຄວາມ ຊົ່ນຊື່ນຍິນດີຢູ່ໃນພຣະຄຳຂອງພຣະເຈົ້າ ແລະ ພາວັນນາເອົາທັງເວັນທັງຄືນ. ພວກເຂົາເປັນດັ່ງຕົ້ນໄມ້ ທີ່ໃຫຍ່ຢູ່ໃກ້ລຳນ້ຳເຊິ່ງເກີດໝາກຕາມລະດູການ ແລະ ໃບກໍບໍ່ຫ່ຽວແຫ້ງຈັກເທື່ອ. ທຸກສິ່ງທີ່ພວກເຂົາ ກະທຳກໍສຳເລັດຜົນ.” (ເພງສັນລະເສີນ 1:1–3 LO2012). ການຟື້ນຟູຄວາມເຊື່ອ ແລະ ຊີວິດຝ່າຍ ຈິດວິນຍານແບບດັ້ງເດີມໃນທ່າມກາງຜູ້ທີ່ອ້າງຕົນວ່າເປັນໄພ່ພົນຂອງພຣະເຈົ້າ ຈະເກີດຂຶ້ນໄດ້ກໍຕໍ່ເມື່ອ ພຣະບັນຍັດຂອງພຣະເຈົ້າກັບມາມີບົດບາດຢ່າງທີ່ຄວນຈະເປັນເທົ່ານັ້ນ. “ອົງພຣະຜູ້ເປັນເຈົ້າໄດ້ກ່າວ ແກ່ປະຊາຊົນຂອງພຣະອົງວ່າ, ‘ຈົ່ງຢຸດຢູ່ທີ່ທາງສີ່ແຍກ ແລະ ແນມເບິ່ງ. ຈົ່ງຖາມຫາຫົນທາງແຕ່ ເກົ່າແກ່ ແລະ ຫົນທາງອັນດີເລີດນັ້ນວ່າຢູ່ໃສ. ຈົ່ງເດີນໄປຕາມທາງນັ້ນ ແລະ ພວກເຈົ້າກໍຈະພົບຄວາມ ຢູ່ເຢັນເປັນສຸກ.’” (ເຢເຣມີຢາ 6:16 LO2012). *{GC 478.3}*



ດານີເອນອະທິບາຍວ່າ: “ຂ້າພະເຈົ້າໄດ້ສືບຕໍ່ກ່າວ ແລະ ພາວັນນາອະທິຖານ ໂດຍ ສາລະພາບບາບຂອງຂ້າພະເຈົ້າ ແລະ ບາບຂອງຊາວອິດສະຣາເອນປະຊາຊົນຂອງຂ້າພະເຈົ້າ.”

ເບິ່ງໜ້າ 379.

Image generated with AI (Google Gemini).

28

ການພິພາກສາ

ປຶ້ມບັນທຶກໃນສະຫວັນ

ຜູ້ເຜີຍພຣະທຳດານີເອນກ່າວວ່າ: “ຂະນະທີ່ຂ້າພະເຈົ້າຫຼຽວເບິ່ງ ບັນລັງຫຼາຍບັນລັງຖືກຕັ້ງໄວ້ ອົງຜູ້ດຳລົງຊີວິດຢັ້ງຢືນຕະຫຼອດການໄດ້ນັ່ງລົງ, ເຄື່ອງແຕ່ງກາຍຂອງພຣະອົງຂາວຄືກັບຫິມະ, ຜົມຂອງ ພຣະອົງຂາວດັ່ງຂົນແກະ, ບັນລັງຂອງພຣະອົງດຸດດັ່ງແປວໄຟ ລໍ້ບັນລັງດັ່ງໄຟລຸກ, ບຶງໄຟພຸ່ງອອກມາ ຈາກເບື້ອງໜ້າພຣະອົງ. ຄົນນັບພັນນັບໝື່ນຮັບໃຊ້ພຣະອົງ ແລະ ຄົນນັບແສນນັບລ້ານຢືນຮັບຄຳສັ່ງຢູ່ ເບື້ອງໜ້າພຣະອົງ ແລ້ວສານກໍເລີ່ມພິຈາລະນາຄະດີ ແລະ ໜັງສືຫຼາຍຫໍ່ໄດ້ເປີດອອກ.” (ດານີເອນ 7:9–10 ດັດແປງຈາກສະບັບ NTV). *{GC 479.1}*

ນິມິດນີ້ໄດ້ສະແດງໃຫ້ຜູ້ເຜີຍພຣະທຳດານີເອນເຫັນເຖິງອັນສຳຄັນຍິ່ງໃຫຍ່ ເມື່ອອຸປະນິໄສ ແລະ ວິຖີ ຊີວິດຂອງມະນຸດທຸກຄົນຈະຖືກທົບທວນຄືນຕໍ່ໜ້າຜູ້ພິພາກສາພິພົບໂລກ; ແລະທຸກຄົນຈະໄດ້ຮັບ “ຕາມ ການກະທຳຂອງຕົນ.” (ມັດທາຍ 16:27). ພຣະອົງຜູ້ດຳລົງຊີວິດ “ຢັ້ງຢືນຕະຫຼອດການ” ກໍຄືພຣະເຈົ້າ ພຣະບິດາ. ຜູ້ຂຽນເພງສັນລະເສີນກ່າວວ່າ: “ກ່ອນທີ່ພູຜາປ່າໄມ້ຖືກສ້າງຂຶ້ນມາ, ກ່ອນທີ່ໂລກເຮົາດຳລົງ ຄົງຕົວຢູ່ຢ່າງນີ້, ພຣະອົງເປັນພຣະເຈົ້າອົງເປັນຢູ່ຊົ່ວນິຣັນດອນ ແລະ ເປັນພຣະເຈົ້າທີ່ດຳລົງຢູ່ສືບໄປ ເປັນນິດ.” (ເພງສັນລະເສີນ 90:2). ພຣະບິດາຜູ້ຊົງເປັນຕົ້ນກຳເນີດຂອງທຸກຊີວິດ ແລະ ແຫຼ່ງທີ່ ມາຂອງກົດບັນຍັດທັງປວງນັ້ນ ຈະຊົງເປັນປະທານໃນການພິພາກສາ. ບັນດາທູດສະຫວັນຜູ້ບໍຣິສຸດ ຈຳນວນ ‘ນັບເປັນພັນໆ ລ້ານໆ’ ກໍມາຮ່ວມໃນການພິພາກສາອັນຍິ່ງໃຫຍ່ນີ້ໃນຖານະພະຍານ ແລະ ຜູ້ຮັບໃຊ້. *{GC 479.2}*

“ຂ້າພະເຈົ້າເຫັນຜູ້ໜຶ່ງເໝືອນບຸດມະນຸດສະເດັດມາພ້ອມດ້ວຍໝູ່ເມກແຫ່ງຟ້າສະຫວັນ. ພຣະອົງ ສະເດັດເຂົ້າໄປໃກ້ ແລະ ເຂົ້າເຝົ້າອົງຜູ້ດຳລົງຢູ່ຕັ້ງແຕ່ດຶກດຳບັນ.” “ພຣະອົງໄດ້ຮັບສິດອຳນາດ, ສະຫງ່າຣາສີ ແລະ ອຳນາດປົກຄອງສູງສຸດ; ຄົນທຸກຊາດ ແລະ ທຸກພາສາໄດ້ນະມັດສະການ ພຣະອົງ. ອຳນາດຂອງພຣະອົງດຳລົງຢູ່ຕະຫຼອດໄປ ອຳນາດທີ່ຈະບໍ່ມີວັນສິ້ນສຸດ ແລະ ອານາຈັກ ຂອງພຣະອົງຈະບໍ່ມີວັນຖືກທຳລາຍ.” (ດານີເອນ 7:13 TNCV, 14 LCV). ການສະເດັດມາຂອງ ພຣະຄຣິສທີ່ບັນລະຍາຍໄວ້ນີ້ ບໍ່ແມ່ນການສະເດັດມາສູ່ແຜ່ນດິນໂລກຄັ້ງທີສອງຂອງພຣະອົງ. ພຣະອົງ ສະເດັດມາຫາ “ຜູ້ມີຊີວິດຢູ່ຕະຫຼອດໄປ” ໃນສະຫວັນ ເພື່ອຮັບເອົາອຳນາດການປົກຄອງ, ສະຫງ່າຣາສີ ແລະ ຣາຊອານາຈັກ, ເຊິ່ງຈະຖືກມອບໃຫ້ພຣະອົງ ເມື່ອສຳເລັດວຽກງານໃນຖານະຜູ້ເປັນກາງລະຫວ່າງ ພຣະເຈົ້າກັບມະນຸດ. ການສະເດັດມາຄັ້ງນີ້, ບໍ່ແມ່ນການສະເດັດມາຄັ້ງທີສອງຂອງພຣະອົງ, ແຕ່ເປັນ ການສະເດັດທີ່ໄດ້ຖືກພະຍາກອນໄວ້ລ່ວງໜ້າວ່າ ຈະເກີດຂຶ້ນເມື່ອສິ້ນສຸດ 2,300 ວັນໃນປີ 1844. ເຫຼົ່າ ທູດສະຫວັນໄດ້ຕິດຕາມມະຫາປະໂຣຫິດຜູ້ຍິ່ງໃຫຍ່ຂອງພວກເຮົາ ເມື່ອພຣະອົງສະເດັດເຂົ້າສູ່ສະຖານທີ່ ສັກສິດທີ່ສຸດ. ພຣະອົງປະທັບຢູ່ຕໍ່ພຣະພັກພຣະເຈົ້າ ເພື່ອປະກອບພາລະກິດສຸດທ້າຍ ໃນຖານະ

ມະຫາປະໂຣຫິດເພື່ອມະນຸດ. ໃນທີ່ນັ້ນພຣະອົງຈະດຳເນີນການພິພາກສາແບບສືບສວນ ແລະ ລຶບລ້າງ ຄວາມຜິດບາບໃຫ້ແກ່ທຸກຄົນທີ່ມີສິດໄດ້ຮັບພຣະພອນນີ້. {GC 479.3}

ໃນພິທີທີ່ເຮັດໃນສະໄໝພຣະຄຳພີເດີມນັ້ນ, ມີພຽງແຕ່ຜູ້ທີ່ມາຫາພຣະເຈົ້າດ້ວຍການສາລະພາບ ແລະ ການກັບໃຈໃໝ່ເທົ່ານັ້ນ ທີ່ໄດ້ມີສ່ວນໃນພິທີກຳຂອງວັນລຶບລ້າງບາບ, ກໍຄືຄົນທີ່ບາບຂອງພວກເຂົາໄດ້ຖືກ ໂອນໄປຍັງສະຖານນະມັດສະການ ໂດຍຜ່ານເລືອດຂອງເຄື່ອງບູຊາໄຖ່ບາບ. ໃນທຳນອງດຽວກັນ, ໃນ ວັນຍິ່ງໃຫຍ່ແຫ່ງການລຶບລ້າງບາບຄັ້ງສຸດທ້າຍ ແລະ ການພິພາກສາແບບສືບສວນ, ຈະພິຈາລະນາ ສະເພາະຄະດີຂອງຜູ້ທີ່ອ້າງຕົນວ່າເປັນໄພ່ພົນຂອງພຣະເຈົ້າເທົ່ານັ້ນ. ການພິພາກສາຄົນຊົ່ວເປັນວຽກງານ ອີກຢ່າງໜຶ່ງຕ່າງຫາກ ແລະ ຈະເກີດຂຶ້ນໃນພາຍຫຼັງ. “ການພິພາກສາຈະເລີ່ມຂຶ້ນທີ່ຄົວເຮືອນຂອງ ພຣະເຈົ້າ ແລະ ຖ້າການພິພາກສາເລີ່ມຕົ້ນທີ່ພວກເຮົາກ່ອນ ແລ້ວຜົນທີ່ຈະໄດ້ຮັບຂອງບັນດາຜູ້ທີ່ບໍ່ ເຊື່ອຟັງຂ່າວປະເສີດຂອງພຣະເຈົ້າຈະເປັນຢ່າງໃດ?” (1 ເປໂຕ 4:17 LCV). {GC 480.1}

ປຶ້ມບັນທຶກໃນສະຫວັນທີ່ຈົດບັນທຶກຊື່ ແລະ ການກະທຳຂອງມະນຸດຈະເປັນຕົວກຳນົດຜົນຂອງ ການພິພາກສາ. ຜູ້ເຜີຍພຣະທຳດານີເອນກ່າວວ່າ: “ສານເລີ່ມການພິພາກສາ ແລະ ໜັງສືຕ່າງໆ ກໍຖືກເປີດອອກ.” ສ່ວນໂຢຮັນເມື່ອອະທິບາຍເຫດການດຽວກັນກໍເວົ້າຕື່ມວ່າ: “ມີໜັງສືອີກເຫຼັ້ມໜຶ່ງກໍ ໄດ້ເປີດອອກເໝືອນກັນ ເຊິ່ງເປັນໜັງສືແຫ່ງຊີວິດ. ຜູ້ທີ່ຕາຍແລ້ວກໍຖືກພິພາກສາຕາມການກະທຳທີ່ ພວກເຂົາໄດ້ເຮັດ ຕາມທີ່ໄດ້ບັນທຶກໄວ້ໃນໜັງສືເຫຼົ່ານັ້ນ.” (ພຣະນິມິດ 20:12 LCV). {GC 480.2}

ທະບຽນແຫ່ງຊີວິດໄດ້ບັນທຶກລາຍຊື່ຂອງທຸກຄົນທີ່ເຄີຍຮັບໃຊ້ພຣະເຈົ້າ. ພຣະເຢຊູຊົງກ່າວແກ່ພວກ ສາວົກຂອງພຣະອົງວ່າ: “ຈົ່ງຍິນດີ ເພາະຊື່ຂອງພວກເຈົ້າຖືກຈົດໄວ້ແລ້ວໃນສະຫວັນ.” (ລູກາ 10:20 LCV). ອາຈານໂປໂລໄດ້ເວົ້າເຖິງເພື່ອນຮ່ວມງານທີ່ສັດຊື່ວ່າ “ຄົນເຫຼົ່ານີ້ມີຊື່ຢູ່ໃນທະບຽນແຫ່ງຊີວິດ ແລ້ວ.” (ຟີລິບປອຍ 4:3 LCV). ດານີເອນໄດ້ເຫັນໃນນິມິດວ່າ ຈະມີ “ການລຳບາກໜັກເກີດຂຶ້ນ ຢ່າງບໍ່ເຄີຍມີມາ” ແລະ ປະກາດວ່າ ໄພ່ພົນຂອງພຣະເຈົ້າຈະໄດ້ຮັບການຊ່ວຍກູ້, “ຄືທຸກຄົນທີ່ຈະມີຊື່ ພົບຂຽນໄວ້ໃນໜັງສືນັ້ນ.” ສ່ວນໂຢຮັນກ່າວວ່າ ມີແຕ່ຜູ້ທີ່ມີຊື່ “ຈົດໄວ້ໃນໜັງສືແຫ່ງຊີວິດຂອງລູກແກະ ຂອງພຣະເຈົ້າ” ເທົ່ານັ້ນ ທີ່ຈະໄດ້ເຂົ້າໄປໃນນະຄອນຂອງພຣະເຈົ້າ. (ດານີເອນ 12:1 ສະບັບລາວ ບູຮານ; ພຣະນິມິດ 21:27 LCV). {GC 480.3}

ມີ “ໜັງສືທີ່ລະລຶກ” ຢູ່ຕໍ່ພຣະພັກພຣະເຈົ້າ ທີ່ບັນທຶກການກະທຳດີຂອງ “ຄົນທັງຫຼາຍທີ່ຢຳເກງ ພຣະເຢໂຮວາ ແລະ ສຳລັບຄົນທັງຫຼາຍທີ່ຄິດເຖິງນາມຊື່ຂອງພຣະອົງ.” (ມາລາກີ 3:16 ສະບັບ ລາວບູຮານ). ຖ້ອຍຄຳແຫ່ງຄວາມເຊື່ອ ແລະ ການກະທຳແຫ່ງຄວາມຮັກຂອງພວກເຂົາໄດ້ຖືກບັນທຶກ ໄວ້ໃນສະຫວັນ. ເນເຫມີຢາອ້າງເຖິງເລື່ອງນີ້ໂດຍກ່າວວ່າ: “ຂໍຊົງໂຜດຈົດຈຳສິ່ງດີໆ ທັງໝົດເຫຼົ່ານີ້ທີ່ ຂ້ານ້ອຍໄດ້ເຮັດສຳລັບວິຫານຂອງພຣະເຈົ້າຂອງຂ້ານ້ອຍ.” (ເນເຫມີຢາ 13:14). ໃນໜັງສືທີ່ລະລຶກ ຂອງພຣະເຈົ້າ ຫຼື ທີ່ພາສາໄທສະບັບປີ 1940 ເອີ້ນວ່າ “ໜັງສືບັນທຶກຄວາມຈຳ,” ທຸກການກະທຳ ທີ່ຊອບທຳຈະຄົງຢູ່ຕະຫຼອດໄປ. ທຸກຄັ້ງທີ່ມີການຕໍ່ຕ້ານການທົດລອງ, ທຸກຄັ້ງທີ່ເອົາຊະນະຄວາມ ຊົ່ວ ແລະ ທຸກຖ້ອຍຄຳແຫ່ງຄວາມເມດຕາ ລ້ວນຖືກບັນທຶກໄວ້ຢ່າງຄົບຖ້ວນ. ນອກຈາກນັ້ນ, ທຸກ ຄັ້ງທີ່ມີການເສຍສະຫຼະ, ທຸກຄັ້ງທີ່ຕ້ອງທົນຕໍ່ຄວາມທຸກ ແລະ ຄວາມໂສກເສົ້າເພື່ອພຣະຄຣິສ ກໍຖືກ ບັນທຶກໄວ້ເຊັ່ນກັນ. ຜູ້ຂຽນເພງສັນລະເສີນກ່າວວ່າ: “ພຣະອົງຮູ້ວ່າ ຂ້ານ້ອຍຖືກເດືອດຮ້ອນສ່ຳໃດ ຈົ່ງ ຊົງບັນຈຸນ້ຳຕາໃສ່ແກ້ວໄວ້. ນ້ຳຕາຂອງຂ້ານ້ອຍໄດ້ຖືກບັນທຶກໄວ້ໃນປຶ້ມບັນຊີຂອງພຣະອົງແລ້ວບໍ່ແມ່ນ ຫຼື?” (ເພງສັນລະເສີນ 56:8). {GC 481.1}

ບັນທຶກຄວາມລັບ

ມີການບັນທຶກຄວາມບາບຂອງມະນຸດໄວ້ເຊັ່ນກັນ. “ພຣະເຈົ້າຈະຕັດສິນທຸກສິ່ງທີ່ພວກເຮົາເຮັດ ບໍ່ວ່າດີຫຼືຊົ່ວ ແມ່ນແຕ່ສິ່ງທີ່ພວກເຮົາໄດ້ເຮັດໃນທີ່ລັບລີ້ດ້ວຍ.” (ປັນຍາຈານ 12:14). ພຣະຜູ້ຊ່ວຍໃຫ້ລອດຊົງກ່າວວ່າ: “ໃນວັນພິພາກສາ ມະນຸດຈະຕ້ອງຮັບຜິດຊອບຕໍ່ຖ້ອຍຄຳເປົ່າ ໆ ທຸກຄຳທີ່ພວກເຂົາເວົ້າອອກມາ, ເພາະເຈົ້າຈະພົ້ນໂທດໄດ້ ກໍດ້ວຍຄຳເວົ້າຂອງເຈົ້າ ແລະ ເຈົ້າຈະຖືກໂທດ ກໍດ້ວຍຄຳເວົ້າຂອງເຈົ້າ.” (ມັດທາຍ 12:36, 37 LCV). ເຈດຕະນາ ແລະ ແຮງຈູງໃຈລັບ ໆ ທັງໝົດ ລ້ວນຖືກບັນທຶກໄວ້ໃນປຶ້ມຢ່າງບໍ່ມີຄວາມຜິດພາດ; ດ້ວຍວ່າພຣະເຈົ້າຈະ “ນຳເອົາສິ່ງທີ່ເຊື່ອງໄວ້ຢູ່ໃນຄວາມມືດມາສູ່ຄວາມສະຫວ່າງ ແລະ ຈະເປີດເຜີຍບັນດາແຮງຈູງໃຈທີ່ຢູ່ໃນໃຈ.” (1 ໂກຣິນໂທ 4:5 LCV). “‘ຂໍ້ຄວາມນີ້ຂຽນໄວ້ຕໍ່ໜ້າເຮົາ’... ພຣະເຢໂຮວາກ່າວວ່າ ‘ທັງການອະທຳຂອງພວກທ່ານ ກັບການອະທຳຂອງປູ່ຍ່າຕາຍາຍນັ້ນ.’” (ເອຊາຢາ 65:6, 7 ສະບັບລາວບູຮານ). *{GC 481.2}*

ການກະທຳຂອງແຕ່ລະຄົນຖືກນຳມາພິຈາລະນາຕໍ່ພຣະພັກພຣະເຈົ້າ ແລະ ຖືກຈົດບັນທຶກໄວ້ວ່າສັດຊື່ຫຼືບໍ່ສັດຊື່. ຢູ່ຂ້າງຊື່ຂອງທຸກຄົນໃນປຶ້ມບັນທຶກແຫ່ງສະຫວັນ ທູດສະຫວັນໄດ້ຈົດບັນທຶກທຸກສິ່ງຢ່າງລະອຽດທີ່ສຸດ: ບໍ່ວ່າຈະເປັນຄຳເວົ້າຜິດ ໆ, ການກະທຳທີ່ເຫັນແກ່ຕົວ, ໜ້າທີ່ທີ່ບໍ່ໄດ້ເຮັດສຳເລັດ, ບາບທີ່ເຊື່ອງຊ່ອນໄວ້ ແລະ ການປອມແປງຢ່າງມີເລ່ຫຼ່ຽມ. ນອກຈາກນີ້, ຍັງບັນທຶກການບໍ່ເອົາໃຈໃສ່ຕໍ່ຄຳຕັກເຕືອນວ່າກ່າວຈາກສະຫວັນ, ເວລາທີ່ເສຍໄປລ້າ ໆ, ໂອກາດທີ່ບໍ່ໄດ້ໃຊ້ໃຫ້ເປັນປະໂຫຍດ ແລະ ການກະທຳທີ່ສົ່ງຜົນດີ ຫຼື ຜົນຮ້າຍຕໍ່ຄົນອື່ນ ເຊິ່ງມີຜົນສະທ້ອນອັນກວ້າງໄກ. *{GC 482.1}*

ມາດຕະຖານແຫ່ງການພິພາກສາ

ພຣະບັນຍັດຂອງພຣະເຈົ້າເປັນມາດຕະຖານທີ່ຈະໃຊ້ໃນການພິພາກສາເພື່ອທົດສອບອຸປະນິໄສ ແລະ ຊີວິດຂອງມະນຸດ. ກະສັດໂຊໂລໂມນກ່າວວ່າ: “ຈົ່ງຢຳເກງພຣະເຈົ້າ ແລະ ຈົ່ງຖືຮັກສາຄຳສັ່ງທັງຫຼາຍຂອງພຣະອົງ, ເຫດວ່າການນີ້ເປັນສັບພະທຸກສິ່ງແກ່ມະນຸດ, ເຫດວ່າພຣະເຈົ້າຈະຕັດສິນກິດຈະການທຸກປະການ.” (ປັນຍາຈານ 12:13, 14 ສະບັບລາວບູຮານ). ອັກຄະສາວົກຢາໂກໂບເຕືອນພວກພີ່ນ້ອງຂອງເພິ່ນວ່າ: “ເຈົ້າທັງຫຼາຍຈົ່ງເວົ້າ ແລະ ເຮັດເໝືອນຢ່າງຄົນທີ່ກຳລັງຈະໄດ້ຮັບການພິພາກສາດ້ວຍກົດທີ່ໃຫ້ມີເສລີພາບ.” (ຢາໂກໂບ 2:12). *{GC 482.2}*

ໃນການພິພາກສານັ້ນ “ຄົນທີ່ຖືວ່າສົມຄວນ” ຈະໄດ້ມີສ່ວນໃນການຟື້ນຄືນຊີວິດຂອງຜູ້ຊອບທຳ. ພຣະເຢຊູຊົງກ່າວວ່າ: “ຄົນທີ່ຖືວ່າສົມຄວນ ມີສ່ວນໃນຍຸກທີ່ຈະມາເຖິງ ແລະ ໃນການເປັນຄືນມາຈາກຕາຍນັ້ນ, ... ພວກເຂົາຈະເປັນເໝືອນເທວະດາທີ່ຕາຍບໍ່ເປັນ. ພວກເຂົາເປັນລູກຂອງພຣະເຈົ້າ ເພາະພວກເຂົາເປັນລູກແຫ່ງການເປັນຄືນມາຈາກຕາຍ.” (ລູກາ 20:35, 36 LCV). ພຣະອົງຊົງປະກາດອີກວ່າ “ຜູ້ທີ່ເຮັດດີກໍຈະເປັນຄືນມາສູ່ຊີວິດ.” (ໂຢຮັນ 5:29 LCV). ຜູ້ຊອບທຳທີ່ລ່ວງລັບໄປແລ້ວຈະບໍ່ເປັນຄືນມາ ຈົນກວ່າຈະມີການພິພາກສາທີ່ປະກາດວ່າ ພວກເຂົາສົມຄວນໄດ້ຮັບ “ການເປັນຄືນມາສູ່ຊີວິດ.” ສະນັ້ນ, ພວກເຂົາຈະບໍ່ໄດ້ປາກົດຕົວຢູ່ທີ່ບັນລັງພິພາກສາ ໃນເວລາທີ່ມີການກວດສອບການບັນທຶກ ແລະ ຕັດສິນຄະດີຂອງພວກເຂົາ. *{GC 482.3}*

ພຣະເຢຊູຈະປາກົດໃນຖານະ ຜູ້ວິງວອນແທນພວກເຂົາຕໍ່ພຣະພັກພຣະເຈົ້າ. “ຖ້າຜູ້ໃດເຮັດບາບ ພວກເຮົາກໍມີຜູ້ແກ້ຄວາມຕໍ່ພຣະບິດາເຈົ້າ ຄືພຣະເຢຊູຄຣິສເຈົ້າ ອົງຜູ້ຊອບທຳ.” (1 ໂຢຮັນ 2:1 LCV). “ເພາະພຣະຄຣິສເຈົ້າບໍ່ໄດ້ເຂົ້າສູ່ສະຖານບະມັດສະການທີ່ມະນຸດສ້າງຂຶ້ນ ເຊິ່ງເປັນພຽງແບບຈຳລອງມາຈາກຂອງແທ້, ພຣະອົງເຂົ້າສູ່ສະຫວັນໂດຍກົງ, ບັດນີ້ ໄດ້ປາກົດຢູ່ຕໍ່ໜ້າພຣະເຈົ້າເພື່ອ

ພວກເຮົາທັງຫຼາຍ.” “ເຫດສະນັ້ນ, ພຣະອົງຈຶ່ງສາມາດຊ່ວຍບັນດາຜູ້ທີ່ມາຫາພຣະເຈົ້າໂດຍທາງພຣະອົງໄດ້ຢ່າງສົມບູນ ເພາະພຣະອົງມີຊີວິດຢູ່ ເພື່ອຈະອ້ອນວອນເພື່ອພວກເຂົາສະເໝີ.” (ເຮັບເຣີ 9:24 LCV; 7:25 LCV). *{GC 482.4}*

ເມື່ອເປີດປຶ້ມບັນທຶກໃນການພິພາກສາ, ຊີວິດຂອງທຸກຄົນທີ່ເຄີຍມີຄວາມເຊື່ອໃນພຣະເຢຊູ ຈະຖືກທົບທວນຕໍ່ພຣະພັກພຣະເຈົ້າ. ພຣະເຢຊູຊົງເຮັດໜ້າທີ່ຜູ້ອ້ອນວອນເພື່ອເຮົາ ຊົງນຳສະເໜີຄະດີຂອງທຸກຊົ່ວອາຍຸຄົນຕາມລຳດັບ ຕັ້ງແຕ່ສະໄໝເລີ່ມຕົ້ນ ຈົນປິດທ້າຍກັບຜູ້ທີ່ຍັງມີຊີວິດຢູ່. ມີການກວດສອບທຸກຊື່ ແລະ ມີການພິຈາລະນາທຸກຄະດີຢ່າງຖີ່ຖ້ວນ. ບາງຄົນຖືກຍອມຮັບ, ບາງຄົນຖືກປະຕິເສດ. ຖ້າຜູ້ໃດມີຄວາມບາບທີ່ຍັງຢູ່ໃນປຶ້ມບັນທຶກເຫຼົ່ານັ້ນ ໂດຍຍັງບໍ່ໄດ້ປະຖິ້ມ ແລະ ຍັງບໍ່ໄດ້ຮັບການອະໄພ, ຊື່ຂອງຜູ້ນັ້ນຈະຖືກລຶບອອກຈາກທະບຽນແຫ່ງຊີວິດ ແລະ ການກະທຳດີຂອງລາວ ຈະຖືກລຶບອອກຈາກໜັງສືທີ່ລະລຶກຂອງພຣະເຈົ້າ. ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ: “ຜູ້ໃດເຮັດບາບຕໍ່ສູ້ເຮົາ ເຮົາຈະລຶບຊື່ຜູ້ນັ້ນອອກຈາກປຶ້ມບັນຊີຂອງເຮົາ.” (ອົບພະຍົບ 32:33). ສ່ວນຜູ້ເຜີຍພຣະທຳເອເຊກຽນກ່າວວ່າ: “ຖ້າຄົນຊອບທຳຜູ້ໜຶ່ງເຊົາເຮັດການດີ ແລະ ເລີ່ມເຮັດແຕ່ການຊົ່ວ . . . ການດີທີ່ລາວໄດ້ເຮັດມານັ້ນ ຈະບໍ່ມີຜູ້ໃດລະນຶກເຖິງເລີຍ.” (ເອເຊກຽນ 18:24). *{GC 483.1}*

ທຸກຄົນທີ່ໄດ້ກັບໃຈຈາກຄວາມບາບຢ່າງແທ້ຈິງ ແລະ ຮັບເຊື່ອວ່າ ພຣະໂລຫິດຂອງພຣະຄຣິສເປັນເຄື່ອງບູຊາໄຖ່ບາບຂອງຕົນ ໄດ້ຮັບຄຳວ່າ “ອະໄພ” ຈົດໄວ້ຄຽງຂ້າງຊື່ຂອງຕົນໃນປຶ້ມບັນທຶກແຫ່ງສະຫວັນ. ເມື່ອພວກເຂົາມີສ່ວນຮ່ວມໃນຄວາມຊອບທຳຂອງພຣະຄຣິສ ແລະ ມີອຸປະນິໄສສອດຄ່ອງກັບພຣະບັນຍັດຂອງພຣະເຈົ້າ, ບາບຂອງພວກເຂົາກໍຈະຖືກລຶບລ້າງອອກໄປ ແລະ ພຣະເຈົ້າຈະຖືວ່າພວກເຂົາສົມຄວນໄດ້ຮັບຊີວິດນິຣັນ. ອົງພຣະຜູ້ເປັນເຈົ້າຊົງປະກາດ ໂດຍຜ່ານຜູ້ເຜີຍພຣະທຳເອຊາຢາວ່າ: “ເຮົາຄືພຣະອົງນັ້ນ ຜູ້ລຶບລ້າງການລະເມີດຂອງເຈົ້າ ດ້ວຍເຫັນແກ່ເຮົາເອງ; ແລະເຮົາຈະບໍ່ຈົດຈຳບາບທັງຫຼາຍຂອງເຈົ້າໄວ້.” (ເອຊາຢາ 43:25 ດັດແປງຈາກສະບັບ TKJV). ພຣະເຢຊູຊົງກ່າວວ່າ: “ຜູ້ທີ່ມີໄຊຊະນະ ຜູ້ນັ້ນຈະໄດ້ຫົ່ມເຄື່ອງຂາວ ແລະ ເຮົາຈະບໍ່ລຶບຊື່ຂອງຜູ້ນັ້ນອອກຈາກທະບຽນແຫ່ງຊີວິດ, ແຕ່ເຮົາຈະຮັບຮອງຊື່ຜູ້ນັ້ນຊ້ອງພຣະພັກພຣະບິດາເຈົ້າຂອງເຮົາ ແລະ ຕໍ່ໜ້າຝູງເທວະດາຂອງພຣະອົງ.” “ຜູ້ໃດກໍຕາມຍອມຮັບເຮົາຕໍ່ໜ້າມະນຸດ, ເຮົາກໍຈະຍອມຮັບຜູ້ນັ້ນ ຕໍ່ໜ້າພຣະບິດາເຈົ້າຂອງເຮົາໃນສະຫວັນເໝືອນກັນ. ແຕ່ຜູ້ໃດທີ່ປະຕິເສດເຮົາຕໍ່ໜ້າມະນຸດ, ເຮົາກໍຈະປະຕິເສດຜູ້ນັ້ນ ຕໍ່ໜ້າພຣະບິດາເຈົ້າຂອງເຮົາໃນສະຫວັນ.” (ພຣະນິມິດ 3:5; ມັດທາຍ 10:32, 33 LCV). *{GC 483.2}*

ເຖິງແມ່ນວ່າ ມະນຸດຈະສົນໃຈການຕັດສິນຂອງສານຫຼາຍປານໃດກໍຕາມ ກໍຍັງທຽບບໍ່ໄດ້ກັບຄວາມສົນໃຈຂອງເຫຼົ່າທູດສະຫວັນ ເມື່ອລາຍຊື່ທີ່ບັນທຶກໄວ້ໃນໜັງສືແຫ່ງຊີວິດຖືກນຳມາທົບທວນຕໍ່ໜ້າພຣະພັກຂອງພຣະເຈົ້າ. ພຣະເຢຊູຊົງຂໍໃຫ້ທຸກຄົນທີ່ມີໄຊຊະນະໂດຍຄວາມເຊື່ອໃນພຣະໂລຫິດຂອງພຣະອົງນັ້ນ ໄດ້ຮັບການອະໄພການລະເມີດຂອງພວກເຂົາ, ໃຫ້ພວກເຂົາໄດ້ຮັບການຟື້ນຟູຄືນສູ່ບ້ານເດີມໃນສວນເອເດນ ແລະ ໄດ້ສອມົງກຸດເປັນຜູ້ຮັບມໍລະດົກຮ່ວມກັນກັບພຣະອົງໃນ “ອານາຈັກດັ້ງເດີມ” (ມີກາ 4:8 THSV). ເຖິງແມ່ນວ່າຊາຕານພະຍາຍາມຫຼອກລວງ ແລະ ລໍ້ລວງມະນຸດຊາດ ເພື່ອຂັດຂວາງແຜນການຂອງພຣະເຈົ້າໃນການສ້າງມະນຸດກໍຕາມ; ແຕ່ບັດນີ້ພຣະຄຣິສຊົງຂໍຮ້ອງໃຫ້ແຜນການດັ້ງເດີມນັ້ນສຳເລັດ ສະເໝືອນໜຶ່ງວ່າມະນຸດບໍ່ເຄີຍລົ້ມລົງໃນຄວາມບາບ. ສຳລັບໄພ່ພົນຂອງພຣະອົງແລ້ວ ພຣະອົງບໍ່ພຽງແຕ່ຂໍໃຫ້ພວກເຂົາໄດ້ຮັບການອະໄພ ແລະ ຄວາມຊອບທຳຢ່າງຄົບຖ້ວນເທົ່ານັ້ນ, ແຕ່ຍັງຂໍໃຫ້ພວກເຂົາມີສ່ວນໃນພຣະຣັດສະໝີພາບຂອງພຣະອົງ ແລະ ຮ່ວມນັ່ງເທິງບັນລັງກັບພຣະອົງອີກດ້ວຍ. *{GC 483.3}*

ໃນຂະນະທີ່ພຣະເຢຊູກຳລັງອ້ອນວອນເພື່ອຜູ້ທີ່ໄດ້ຮັບພຣະຄຸນຂອງພຣະອົງ, ຊາຕານກໍກ່າວຫາ ພວກເຂົາຕໍ່ພຣະພັກພຣະເຈົ້າ ວ່າເປັນຜູ້ລະເມີດພຣະບັນຍັດ. ມັນໄດ້ພະຍາຍາມຊັກນຳຄົນຂອງ ພຣະອົງໃຫ້ສົງໄສ ແລະ ເຮັດໃຫ້ພວກເຂົາສູນເສຍຄວາມໝັ້ນໃຈໃນພຣະເຈົ້າ. ມັນພະຍາຍາມແຍກ ພວກເຂົາອອກຈາກຄວາມຮັກຂອງພຣະອົງ ແລະ ຊັກນຳພວກເຂົາໃຫ້ລ່ວງລະເມີດພຣະບັນຍັດຂອງ ພຣະອົງ. ບັດນີ້, ມັນຊີ້ໃສ່ປຶ້ມທີ່ບັນທຶກຊີວິດຂອງຄົນເຫຼົ່ານີ້ ແລະ ອ້າງວ່າພວກເຂົາເປັນຂອງມັນ ຍ້ອນ ຄວາມບົກຜ່ອງໃນຕົວຕົນ, ຍ້ອນການກະທຳທີ່ບໍ່ເໝືອນພຣະຄຣິສ ທີ່ໄດ້ສ້າງຄວາມອັບອາຍໃຫ້ແກ່ ພຣະຜູ້ໄຖ່ຂອງພວກເຂົາ, ແລະຍ້ອນຄວາມບາບທັງໝົດທີ່ມັນໄດ້ລໍ້ລວງໃຫ້ພວກເຂົາເຮັດ. *{GC 484.1}*

ຊົງລຶບລ້າງຄວາມບາບ

ພຣະເຢຊູບໍ່ໄດ້ແກ້ຕົວໃຫ້ກັບຄວາມຜິດບາບຂອງຄົນເຫຼົ່ານີ້, ແຕ່ພຣະອົງຊົງຊີ້ໃຫ້ເຫັນການກັບໃຈໃໝ່ ແລະ ຄວາມເຊື່ອຂອງພວກເຂົາ. ເມື່ອຂໍການອະໄພໃຫ້ແກ່ພວກເຂົາ ພຣະອົງຊົງຍົກພຣະຫັດທີ່ມີຮອຍ ບາດແຜຂຶ້ນຕໍ່ພຣະພັກພຣະບິດາ ແລະ ຕໍ່ໜ້າເຫຼົ່າທູດສະຫວັນໂດຍກ່າວວ່າ ‘ຂ້າພະເຈົ້າຮູ້ຈັກຊື່ຂອງ ຄົນເຫຼົ່ານີ້ ຍ້ອນວ່າໄດ້ຈາລຶກໄວ້ທີ່ຝ່າມືຂອງຂ້າພະເຈົ້າແລ້ວ’ ແລະຊົງກ່າວອີກວ່າ: “ເຄື່ອງບູຊາທີ່ ພຣະເຈົ້າພໍພຣະໄທນັ້ນ ແມ່ນຈິດວິນຍານທີ່ຖ່ອມຕົວລົງ ພຣະເຈົ້າບໍ່ໄດ້ຊົງລັງກຽດຈິດໃຈທີ່ຖ່ອມຕົວ ລົງ ແລະ ການກັບໃຈໃໝ່ແທ້.” (ເພງສັນລະເສີນ 51:17). ພຣະອົງຊົງກ່າວຕໍ່ຊາຕານຜູ້ກ່າວຫາ ໄພ່ພົນຂອງພຣະອົງວ່າ: “ຊາຕານເອີຍ ຂໍໃຫ້ອົງພຣະຜູ້ເປັນເຈົ້າລົງໂທດເຈົ້າເຖີດ ຂໍໃຫ້ອົງພຣະຜູ້ເປັນເຈົ້າ ອົງຊົງຮັກນະຄອນເຢຣູຊາເລັມ ລົງໂທດເຈົ້າ. ຊາຍຄົນນີ້ເປັນດັ່ງດຶ້ນຟືນທີ່ມີໄຟລຸກໄໝ້ຢູ່.” (ເຊກາຣີຢາ 3:2 LO2012). ພຣະຄຣິສຈະຊົງຫຸ້ມຫໍ່ຜູ້ທີ່ສັດຊື່ຂອງພຣະອົງດ້ວຍຄວາມຊອບທຳຂອງພຣະອົງເອງ ເພື່ອ ພຣະອົງຈະນຳພວກເຂົາມາຢູ່ຕໍ່ພຣະພັກພຣະບິດາເປັນ “ຄຣິສຕະຈັກທີ່ສະຫງ່າງາມ, ປາສະຈາກ ຮອຍດ່າງ ຫຼື ຮອຍຫຍໍ່ ຫຼື ຕຳໜິໃດໆ.” (ເອເຟໂຊ 5:27 LCV). ຊື່ຂອງພວກເຂົາຖືກບັນທຶກໄວ້ໃນ ໜັງສືແຫ່ງຊີວິດ ແລະ ມີຖ້ອຍຄຳຂຽນໄວ້ກ່ຽວກັບພວກເຂົາວ່າ: “ພວກເຂົາຈະຍ່າງໄປກັບເຮົາ, ນຸ່ງຊຸດ ສີຂາວ, ເພາະພວກເຂົາສົມຄວນແລ້ວ.” (ພຣະນິມິດ 3:4 LCV). *{GC 484.2}*

ດ້ວຍເຫດນີ້, ພັນທະສັນຍາໃໝ່ຈະສຳເລັດຢ່າງຄົບຖ້ວນ ຕາມທີ່ພຣະອົງຊົງສັນຍາໄວ້ວ່າ: “ເຮົາຈະ ອະໄພການບາບຂອງພວກເຂົາ ແລະ ເຮົາຈະບໍ່ຈົດຈຳຄວາມຜິດຂອງພວກເຂົາອີກຕໍ່ໄປ.” “‘ເມື່ອເວລາ ນັ້ນມາເຖິງ ຈະບໍ່ພົບການບາບໃນອິດສະຣາເອນ ແລະ ຄວາມຜິດໃນຢູດາ . . .’ ອົງພຣະຜູ້ເປັນເຈົ້າໄດ້ ກ່າວດັ່ງນີ້ແຫຼະ.” (ເຢເຣມີຢາ 31:34; 50:20 LO2012). “ໃນວັນນັ້ນ ຍອດກິ່ງຂອງພຣະເຢໂຮວາຈະ ງົດງາມ ແລະ ມີສະຫງ່າຣາສີ ແລະ ຜົນຜະລິດຂອງແຜ່ນດິນຈະອຸດົມສົມບູນ ແລະ ສວຍສົດງົດງາມ ສຳລັບຊາວອິດສະຣາເອນທັງຫຼາຍທີ່ໜີລອດປອດໄພ, ແລ້ວຜູ້ທີ່ຍັງເຫຼືອຢູ່ໃນຊີໂອນ ແລະ ຜູ້ທີ່ຍັງຢູ່ ໃນເຢຣູຊາເລັມຈະຖືກເອີ້ນວ່າຜູ້ບໍຣິສຸດ ກໍຄືທຸກຄົນທີ່ມີການຈົດບັນທຶກໄວ້ທ່າມກາງເຫຼົ່າຜູ້ມີຊີວິດໃນ ເຢຣູຊາເລັມ.” (ເອຊາຢາ 4:2, 3 ແປຈາກສະບັບ KJV). *{GC 485.1}*

ວຽກງານການພິພາກສາແບບສືບສວນ ແລະ ການລຶບລ້າງບາບ ຈະຕ້ອງສຳເລັດກ່ອນການສະເດັດ ມາຄັ້ງທີສອງຂອງພຣະຄຣິສ. ຄົນຕາຍຈະຖືກພິພາກສາຕາມສິ່ງທີ່ບັນທຶກໄວ້ໃນໜັງສື; ສະນັ້ນ, ບາບ ຂອງມະນຸດຈະຖືກລຶບລ້າງໄດ້ ກໍຕໍ່ເມື່ອການສືບສວນຄະດີຂອງພວກເຂົາສິ້ນສຸດລົງເທົ່ານັ້ນ. ແຕ່ ອັກຄະສາວົກເປໂຕໄດ້ກ່າວໄວ້ຢ່າງຈະແຈ້ງວ່າ ບາບຂອງຜູ້ທີ່ເຊື່ອຈະຖືກລຶບລ້າງໃນ “ວາລະແຫ່ງ ການຟື້ນໃຈ” ທີ່ມາຈາກອົງພຣະຜູ້ເປັນເຈົ້າ ແລະ ພຣະອົງຈະໄດ້ຊົງສົ່ງພຣະເຢຊູມາ. (ກິດຈະການ 3:19, 20 TNCV). ເມື່ອການພິພາກສາແບບສືບສວນສິ້ນສຸດລົງ, ພຣະຄຣິສຈະສະເດັດມາ ພ້ອມກັບ ບຳເໜັດລາງວັນ ເພື່ອມອບໃຫ້ແຕ່ລະຄົນຕາມການກະທຳຂອງເຂົາ. *{GC 485.2}*

ໃນພິທີອັນເປັນສັນຍະລັກທີ່ເຮັດຢູ່ໃນຫໍເຕັນສັກສິດນັ້ນ ຫຼັງຈາກມະຫາປະໂຣຫິດໄດ້ລຶບລ້າງບາບ ໃຫ້ແກ່ຊາວອິດສະຣາເອນແລ້ວ ເພິ່ນກໍໄດ້ອອກມາອວຍພອນປະຊາຊົນ. ໃນທຳນອງດຽວກັນ, ເມື່ອ ພຣະຄຣິສສິ້ນສຸດວຽກງານການເປັນຄົນກາງ, ພຣະອົງຈະປາກົດ “ບໍ່ແມ່ນເພື່ອຮັບແບກຄວາມບາບ ແຕ່ ເພື່ອນຳເອົາຄວາມພົ້ນມາສູ່ບັນດາຜູ້ທີ່ລໍຄອຍພຣະອົງ.” (ເຮັບເຣີ 9:28 LCV). ໃນເວລານັ້ນ, ພຣະເຢຊູ ຈະປະທານຊີວິດນິຣັນໃຫ້ແກ່ປະຊາກອນຂອງພຣະອົງທີ່ລໍຄອຍພຣະອົງ. ເຊັ່ນດຽວກັບປະໂຣຫິດທີ່ໄດ້ເອົາ ບາບອອກຈາກສະຖານນະມັດສະການ ແລະ ວາງມັນໃສ່ຫົວຂອງແບ້ຮັບບາບ ໂດຍການສາລະພາບ ບາບເຫຼົ່ານັ້ນ, ພຣະຄຣິສກໍຈະໃຫ້ຊາຕານຮັບຜິດຊອບຕໍ່ບາບທັງໝົດ ເພາະມັນເປັນຕົ້ນເຫດຂອງຄວາມ ບາບ ແລະ ເປັນຜູ້ຍົວະໃຫ້ຄົນເຮັດບາບ. ໃນສະໄໝພຣະຄຳພີເດີມ, ແບ້ຮັບບາບຈະແບກບາບຂອງຊາວ ອິດສະຣາເອນອອກໄປສູ່ “ຖິ່ນເປົ່າປ່ຽວ.” (ລະບຽບພວກເລວີ 16:22). ໃນທຳນອງດຽວກັນ, ຊາຕານ ຈະຕ້ອງແບກຮັບເອົາຄວາມຜິດບາບທັງປວງທີ່ມັນໄດ້ຍົວະໃຫ້ໄພ່ພົນຂອງພຣະເຈົ້າກະທຳ. ມັນຈະຖືກ ກັກຂັງໄວ້ໃນໂລກທີ່ຮົກຮ້າງເປົ່າປ່ຽວປາສະຈາກຜູ້ຄົນອາໄສເປັນເວລາໜຶ່ງພັນປີ. ແລ້ວໃນທີ່ສຸດມັນຈະໄດ້ ຮັບໂທດຢ່າງຄົບຖ້ວນຂອງຄວາມບາບ ໃນໄຟທີ່ຈະທຳລາຍຄົນຊົ່ວທັງປວງ. ດັ່ງນັ້ນ, ແຜນການໄຖ່ອັນ ຍິ່ງໃຫຍ່ ຈະບັນລຸຜົນສຳເລັດໃນການລຶບລ້າງຄວາມບາບຄັ້ງສຸດທ້າຍ ແລະ ການຊ່ວຍກູ້ທຸກຄົນທີ່ເຕັມ ໃຈປະຕິເສດຄວາມຊົ່ວ. *{GC 485.3}*

ຕາມກຳນົດເວລາ

ພຣະເຈົ້າຊົງກຳນົດເວລາໄວ້ສຳລັບການພິພາກສາ ຄືເມື່ອໄລຍະເວລາ 2,300 ວັນສິ້ນສຸດລົງ ໃນປີ 1844; ໃນເວລານັ້ນ, ການພິພາກສາແບບສືບສວນ ແລະ ການລຶບລ້າງບາບໄດ້ເລີ່ມຕົ້ນ ຂຶ້ນ. ທຸກຄົນທີ່ເຄີຍຮັບເອົາພຣະນາມຂອງພຣະຄຣິສ ຕ້ອງຜ່ານການກວດສອບຢ່າງລະອຽດນີ້. ທັງຄົນ ເປັນ ແລະ ຄົນຕາຍຈະຖືກພິພາກສາ “ຕາມການກະທຳທີ່ພວກເຂົາໄດ້ເຮັດ ຕາມທີ່ໄດ້ບັນທຶກໄວ້ໃນ ໜັງສືເຫຼົ່ານັ້ນ.” (ພຣະນິມິດ 20:12 LCV). *{GC 486.1}*

ຄວາມບາບທີ່ຍັງບໍ່ທັນໄດ້ສາລະພາບ ແລະ ປະຖິ້ມນັ້ນຈະບໍ່ໄດ້ຮັບການໃຫ້ອະໄພ ແລະ ຈະ ບໍ່ຖືກລຶບອອກຈາກປຶ້ມບັນທຶກ. ບາບເຫຼົ່ານັ້ນ ຈະເປັນຫຼັກຖານກ່າວໂທດຄົນບາບໃນວັນສຳຄັນຂອງ ອົງພຣະຜູ້ເປັນເຈົ້າ. ບໍ່ວ່າຄົນຈະເຮັດຊົ່ວໃນຕອນກາງເວັນ ຫຼື ໃນຄວາມມືດຂອງກາງຄືນ ແຕ່ການ ກະທຳທັງໝົດກໍຍັງເປີດເຜີຍ ແລະ ປະຈັກແຈ້ງຕໍ່ພຣະພັກຂອງພຣະອົງຜູ້ທີ່ພວກເຮົາຕ້ອງໃຫ້ການນັ້ນ. ທູດສະຫວັນໄດ້ເຫັນການບາບທຸກຢ່າງ ແລະ ໄດ້ບັນທຶກໄວ້ໃນການບັນທຶກທີ່ບໍ່ມີຄວາມຜິດພາດ. ຄວາມ ບາບອາດຖືກປົກປິດ, ອາດຖືກປະຕິເສດ ຫຼື ເຊື່ອງຊ່ອນຈາກພໍ່ແມ່, ລູກເມຍ ແລະ ໝູ່ເພື່ອນ. ອາດ ມີພຽງແຕ່ຜູ້ກະທຳຜິດເທົ່ານັ້ນ ທີ່ຮູ້ເຖິງຄວາມຊົ່ວທີ່ລາວເຮັດ ແຕ່ມັນຖືກເປີດເຜີຍຢ່າງຈະແຈ້ງຕໍ່ໜ້າ ຊາວສະຫວັນ. ບໍ່ວ່າຈະເປັນຄວາມມືດຂອງຄ່ຳຄືນທີ່ມືດມິດທີ່ສຸດ ຫຼື ການຫຼອກລວງໃນຮູບແບບ ໃດໆ ກໍບໍ່ສາມາດປິດບັງແມ່ນແຕ່ຄວາມຄິດດຽວຈາກພຣະເຈົ້າອົງນິຣັນ. ພຣະເຈົ້າມີການບັນທຶກທີ່ ລະອຽດຖີ່ຖ້ວນກ່ຽວກັບທຸກການກະທຳທີ່ບໍ່ຍຸຕິທຳ ແລະ ການເຮັດທຸລະກິດທີ່ບໍ່ສັດຊື່ທຸກຢ່າງ. ທ່າທາງ ທີ່ເຄັ່ງສາສະໜາ ກໍບໍ່ສາມາດຫຼອກລວງພຣະອົງໄດ້ ແລະ ການທີ່ພຣະອົງຊົງປະເມີນອຸປະນິໄສຂອງ ມະນຸດ ກໍບໍ່ເຄີຍຜິດພາດ. ມະນຸດອາດຖືກຫຼອກລວງໂດຍຜູ້ທີ່ມີໃຈເສື່ອມຊາມ ແຕ່ພຣະເຈົ້າເຫັນຜ່ານ ການແອບແຝງປອມແປງທຸກຢ່າງ ແລະ ຊົງຮູ້ເຖິງຊີວິດພາຍໃນໃຈທັງສິ້ນ. *{GC 486.2}*

ສິ່ງເຫຼົ່ານີ້ຊ່າງເປັນເລື່ອງທີ່ໜ້າຄິດແທ້ໆ! ທຸກມື້ທີ່ຜ່ານໄປ ບໍ່ມີວັນກັບຄືນມາໄດ້ຕະຫຼອດການ ແລະ ແຕ່ລະມື້ນັ້ນມີການຈົດໄວ້ໃນປຶ້ມບັນທຶກແຫ່ງສະຫວັນ. ຖ້ອຍຄຳທີ່ກ່າວຈາ ແລະ ການກະທຳທີ່ເຮັດໄປ ແລ້ວ ບໍ່ສາມາດຮຽກຄືນມາໄດ້. ທູດສະຫວັນໄດ້ບັນທຶກທັງຄວາມດີ ແລະ ຄວາມຊົ່ວ. ແມ່ນແຕ່ນັກສູ້

ຜູ້ພິຊິດທີ່ຍິ່ງໃຫຍ່ທີ່ສຸດໃນໂລກ ກໍບໍ່ສາມາດຮຽກເອົາການບັນທຶກຂອງພຽງມື້ດຽວໃຫ້ກັບຄືນມາໄດ້. ການກະທຳ, ຄຳເວົ້າຈາ, ແມ່ນແຕ່ຄວາມຕັ້ງໃຈອັນເປັນຄວາມລັບທີ່ສຸດຂອງພວກເຮົາ, ລ້ວນແຕ່ມີນ້ຳໜັກໃນການຕັດສິນຊະຕາກຳວ່າ ເຮົາຈະໄດ້ຮັບພຣະພອນ ຫຼື ຈະຖືກລົງໂທດ. ເຖິງແມ່ນວ່າພວກເຮົາອາດລືມໄປແລ້ວ, ແຕ່ສິ່ງເຫຼົ່ານີ້ຈະເປັນຫຼັກຖານສະໜັບສະໜູນ ຫຼື ກ່າວໂທດພວກເຮົາ. *{GC 486.3}*

ຮູບຖ່າຍສະແດງໃຫ້ເຫັນໃບໜ້າຢ່າງຈະແຈ້ງຄົບຖ້ວນສັນໃດ, ອຸປະນິໄສຂອງມະນຸດ ກໍຖືກຈົດໄວ້ຢ່າງລະອຽດໃນປຶ້ມບັນທຶກເບື້ອງເທິງສັນນັ້ນ. ແຕ່ໜ້າເສຍດາຍທີ່ຄົນພັດບໍ່ຄ່ອຍສົນໃຈກ່ຽວກັບການບັນທຶກທີ່ຈະຖືກເປີດເຜີຍຕໍ່ໜ້າຊາວສະຫວັນ. ຖ້າຜ້າກັ້ງລະຫວ່າງໂລກທີ່ເຫັນໄດ້ ກັບໂລກທີ່ເບິ່ງບໍ່ເຫັນຖືກເປີດອອກ ແລະ ມະນຸດໄດ້ເຫັນທູດສະຫວັນກຳລັງບັນທຶກທຸກຄຳເວົ້າ ແລະ ການກະທຳທີ່ພວກເຂົາຈະຕ້ອງພົບອີກໃນການພິພາກສາ, ຫຼາຍຄົນຄົງຈະລະມັດລະວັງໃນການເວົ້າຈາ ແລະ ຄິດໃຫ້ດີກ່ອນຈະເຮັດສິ່ງໃດ. *{GC 487.1}*

ໃນການພິພາກສາ ພຣະເຈົ້າຈະກວດເບິ່ງວ່າ ພວກເຮົາໄດ້ນຳໃຊ້ຂອງປະທານແຕ່ລະຢ່າງແນວໃດ. ພວກເຮົາໄດ້ໃຊ້ຄວາມສາມາດທີ່ສະຫວັນມອບໃຫ້ແນວໃດ? ເມື່ອອົງພຣະຜູ້ເປັນເຈົ້າສະເດັດມາ ພຣະອົງຈະເຫັນວ່າພວກເຮົາໄດ້ເພີ່ມພູນສິ່ງທີ່ພຣະອົງຊົງມອບໃຫ້ຫຼືບໍ່? ພວກເຮົາໄດ້ພັດທະນາຄວາມສາມາດທີ່ພຣະອົງມອບໃຫ້ແກ່ເຮົາໃນດ້ານຮ່າງກາຍ, ຈິດໃຈ ແລະ ສະຕິປັນຍາ ເພື່ອຖວາຍກຽດແດ່ພຣະເຈົ້າ ແລະ ເປັນພອນໃຫ້ແກ່ເພື່ອນມະນຸດບໍ? ພວກເຮົາໄດ້ໃຊ້ເວລາ, ຄວາມສາມາດໃນການເວົ້າ ແລະ ການຂຽນ, ຊັບສິນ ແລະ ອິດທິພົນຂອງພວກເຮົາແນວໃດ? ພວກເຮົາໄດ້ເຮັດຫຍັງແດ່ເພື່ອຮັບໃຊ້ພຣະຄຣິສ ໂດຍຜ່ານການຊ່ວຍເຫຼືອຄົນທຸກຍາກ, ຄົນເຈັບປ່ວຍ, ລູກກຳພ້າ ຫຼື ແມ່ໝ້າຍ? ພຣະເຈົ້າຊົງມອບໝາຍໃຫ້ພວກເຮົາຮັບຜິດຊອບການຖ່າຍທອດພຣະຄຳອັນສັກສິດຂອງພຣະອົງ; ພວກເຮົາໄດ້ເຮັດແນວໃດກັບຄວາມສະຫວ່າງ ແລະ ຄວາມຈິງທີ່ພຣະອົງປະທານໃຫ້ ເພື່ອນຳພາຄົນໄປສູ່ຄວາມລອດພົ້ນ? ການອ້າງວ່າເຊື່ອໃນພຣະຄຣິສພຽງແຕ່ປາກເປົ່າ ບໍ່ມີຄຸນຄ່າຫຍັງ. ມີແຕ່ຄວາມຮັກທີ່ສະແດງອອກມາດ້ວຍການກະທຳເທົ່ານັ້ນທີ່ແທ້ຈິງ. ສຳລັບສະຫວັນແລ້ວ ມີແຕ່ຄວາມຮັກເທົ່ານັ້ນທີ່ເຮັດໃຫ້ການກະທຳມີຄຸນຄ່າ. ສິ່ງໃດກໍຕາມທີ່ເຮັດດ້ວຍຄວາມຮັກ, ເຖິງວ່າຈະເບິ່ງເປັນເລື່ອງເລັກນ້ອຍໃນສາຍຕາຂອງມະນຸດ, ພຣະເຈົ້າກໍຊົງຍອມຮັບ ແລະ ປະທານບຳເໜັດລາງວັນໃຫ້. *{GC 487.2}*

ຄວາມເຫັນແກ່ຕົວຖືກເປີດເຜີຍ

ຄວາມເຫັນແກ່ຕົວທີ່ຊ່ອນຢູ່ໃນຈິດໃຈຂອງມະນຸດ ຖືກເປີດເຜີຍຢູ່ໃນປຶ້ມບັນທຶກໃນສະຫວັນ. ປຶ້ມເຫຼົ່ານັ້ນໄດ້ບັນທຶກການລະເລີຍຕໍ່ໜ້າທີ່ ທີ່ບໍ່ໄດ້ປະຕິບັດຕໍ່ເພື່ອນມະນຸດ ແລະ ການລະເລີຍຕໍ່ສິ່ງທີ່ພຣະຜູ້ຊ່ວຍໃຫ້ລອດຊົງຮຽກຮ້ອງ. ໃນປຶ້ມເຫຼົ່ານັ້ນພວກເຂົາຈະເຫັນວ່າ ຕົນໄດ້ມອບເວລາ, ຄວາມຄິດ ແລະ ກຳລັງທີ່ຄວນເປັນຂອງພຣະຄຣິສ ໃຫ້ແກ່ຊາຕານຫຼາຍຄັ້ງຫຼາຍຫົນ. ການບັນທຶກທີ່ພວກທູດສະຫວັນນຳຂຶ້ນສະຫວັນນັ້ນ ເປັນເລື່ອງໜ້າເສົ້າໃຈ. ມະນຸດຜູ້ມີສະຕິປັນຍາ ທີ່ອ້າງວ່າເປັນຜູ້ຕິດຕາມພຣະຄຣິສ ກັບຫຼົງລະເລີງກັບການສະສົມຊັບສົມບັດຝ່າຍໂລກ ຫຼື ຄວາມສຸກຕາມແບບຊາວໂລກ. ພວກເຂົາໃຊ້ເງິນ, ເວລາ ແລະ ກຳລັງໄປກັບການອວດອ້າງ ແລະ ການເຮັດຕາມໃຈຕົນເອງ, ແຕ່ພັດອຸທິດເວລາໃຫ້ການອະທິຖານ, ການຄົ້ນຄວ້າພຣະຄຳພີ, ການຖ່ອມໃຈລົງ ແລະ ການສາລະພາບບາບພຽງເລັກໜ້ອຍ. *{GC 487.3}*

ຊາຕານຄິດຄົ້ນອຸບາຍອັນນັບບໍ່ຖ້ວນ ເພື່ອຄອບງຳຈິດໃຈຂອງພວກເຮົາ ບໍ່ໃຫ້ພວກເຮົາສົນໃຈກັບວຽກງານທີ່ສຳຄັນທີ່ສຸດ ທີ່ພວກເຮົາຄວນຈະຮູ້. ຈອມຫຼອກລວງກຽດຊັງຄວາມຈິງອັນຍິ່ງໃຫຍ່ ທີ່ກ່ຽວກັບ

ການຖວາຍບູຊາເພື່ອລຶບລ້າງບາບ ແລະ ພຣະຄຣິສຜູ້ຊົງເປັນຄົນກາງທີ່ຊົງຣິດອຳນາດສູງສຸດ. ມັນຮູ້ວ່າ ຄວາມສຳເລັດຂອງມັນຂຶ້ນຢູ່ກັບການເຮັດໃຫ້ຈິດໃຈຂອງມະນຸດຫັນອອກຈາກພຣະເຢຊູ ແລະ ຄວາມຈິງ ຂອງພຣະອົງ. {GC 488.1}

ຜູ້ທີ່ຈະຮັບພຣະພອນຈາກການເປັນຄົນກາງຂອງພຣະຜູ້ຊ່ວຍໃຫ້ລອດ ບໍ່ຄວນປ່ອຍໃຫ້ສິ່ງໃດມາຂັດ ຂວາງໜ້າທີ່ຂອງຕົນທີ່ຈະ “ເຮັດໃຫ້ຄວາມບໍຣິສຸດສົມບູນ ປາກົດອອກມາຈາກຄວາມຢຳເກງພຣະເຈົ້າ.” (2 ໂກຣິນໂທ 7:1 LCV). ຄວນອຸທິດເວລາອັນມີຄ່ານັ້ນ ໃຫ້ແກ່ການສຶກສາພຣະຄຳແຫ່ງຄວາມຈິງດ້ວຍ ການອະທິຖານຢ່າງຈິງຈັງ ແທນທີ່ຈະໃຊ້ມັນໄປກັບຄວາມມ່ວນຊື່ນ, ການອວດອ້າງ ຫຼື ການຊອກຫາຜົນ ກຳໄລ. ປະຊາກອນຂອງພຣະເຈົ້າຕ້ອງເຂົ້າໃຈເລື່ອງສະຖານນະມັດສະການ ແລະ ການພິພາກສາແບບ ສືບສວນຢ່າງແຈ່ມແຈ້ງ. ທຸກຄົນຈຳເປັນຕ້ອງຮູ້ດ້ວຍຕົນເອງ ກ່ຽວກັບໜ້າທີ່ວຽກງານຂອງມະຫາປະໂຣຫິດ ຜູ້ຍິ່ງໃຫຍ່ຂອງພວກເຂົາ. ຖ້າບໍ່ດັ່ງນັ້ນ ພວກເຂົາຈະບໍ່ສາມາດມີຄວາມເຊື່ອທີ່ຈຳເປັນໃນຍຸກນີ້ ຫຼື ເຮັດ ໜ້າທີ່ຕາມພຣະປະສົງຂອງພຣະເຈົ້າ. ທຸກຄົນມີໜ້າທີ່ຮັບຜິດຊອບຕໍ່ຄວາມລອດພົ້ນ ຫຼື ຄວາມພິນາດ ຂອງຕົນເອງ. ແຕ່ລະຄົນມີຄະດີທີ່ລໍຖ້າການຕັດສິນຢູ່ໜ້າບັນລັງແຫ່ງການພິພາກສາຂອງພຣະເຈົ້າ. ທຸກ ຄົນຈະຕ້ອງຢືນຢູ່ຕໍ່ໜ້າພຣະພັກຂອງອົງຜູ້ພິພາກສາຍິ່ງໃຫຍ່. ສະນັ້ນ, ມັນຈຶ່ງສຳຄັນທີ່ສຸດທີ່ທຸກຄົນ ຈະຕ້ອງຄຳນຶງເຖິງເຫດການອັນໜ້າຢ້ານກົວຢູ່ເລື້ອຍໆ ເມື່ອການພິພາກສາເລີ່ມຂຶ້ນ ແລະ ໜັງສືຖືກ ເປີດອອກ, ຄືໃນຍຸກສຸດທ້າຍເມື່ອທຸກຄົນຈະຕ້ອງ “ຢືນຂຶ້ນໃນສ່ວນທີ່ກຳນົດໃຫ້” ນັ້ນ ເໝືອນກັບ ດານີເອນ. (ເບິ່ງ ດານີເອນ 12:13 TKJV). {GC 488.2}

ທຸກຄົນທີ່ໄດ້ຮັບຄວາມສະຫວ່າງໃນເລື່ອງເຫຼົ່ານີ້ ຕ້ອງເປັນພະຍານເຖິງຄວາມຈິງອັນຍິ່ງໃຫຍ່ ທີ່ ພຣະເຈົ້າໄດ້ມອບໝາຍໄວ້ໃຫ້ພວກເຂົາ. ສະຖານນະມັດສະການໃນສະຫວັນ ເປັນສູນກາງຂອງວຽກງານ ທີ່ພຣະຄຣິສຊົງກະທຳເພື່ອມະນຸດ ແລະ ກ່ຽວຂ້ອງກັບທຸກຄົນທີ່ມີຊີວິດຢູ່ໃນໂລກ. ມັນເປີດເຜີຍ ແຜນການຊົ່ວໄຖ່ຕັ້ງແຕ່ອະດີດຕະການ ຈົນເຖິງໂລກອະວະສານ ແລະ ສະແດງໃຫ້ເຫັນໄຊຊະນະ ໃນການຕໍ່ສູ້ລະຫວ່າງຄວາມຊອບທຳກັບຄວາມບາບ. ສິ່ງເຫຼົ່ານີ້ສຳຄັນຍິ່ງທີ່ທຸກຄົນຄວນສຶກສາຢ່າງ ເລິກເຊິ່ງ ເພື່ອຈະສາມາດອະທິບາຍເຫດຜົນແຫ່ງຄວາມຫວັງຂອງຕົນໃຫ້ແກ່ທຸກຄົນທີ່ຖາມ. {GC 488.3}

ການວິງວອນຂອງພຣະຄຣິສ

ການທີ່ພຣະຄຣິສຊົງອ້ອນວອນເພື່ອມະນຸດ ໃນສະຖານນະມັດສະການເບື້ອງເທິງ ສຳຄັນຕໍ່ແຜນການ ແຫ່ງຄວາມລອດເທົ່າກັບການສິ້ນພຣະຊົນຂອງພຣະອົງເທິງໄມ້ກາງແຂນ. ດ້ວຍການສິ້ນພຣະຊົນ ພຣະ-ອົງໄດ້ເລີ່ມພາລະກິດ ເຊິ່ງຫຼັງຈາກການຟື້ນຄືນພຣະຊົນແລ້ວ ພຣະອົງໄດ້ສະເດັດຂຶ້ນໄປສະຫວັນເພື່ອ ເຮັດໃຫ້ສຳເລັດ. ພວກເຮົາຕ້ອງເຂົ້າໄປພາຍໃນຜ້າກັ້ງດ້ວຍຄວາມເຊື່ອ, “ທີ່ພຣະເຢຊູເຈົ້າຜູ້ຊົງນຳໜ້າ ໄດ້ ສະເດັດເຂົ້າໄປກ່ອນແທນພວກເຮົາແລ້ວ.” (ເຮັບເຣີ 6:20). ແສງສະຫວ່າງຈາກໄມ້ກາງແຂນຂອງ ພຣະຄຣິສ ໄດ້ສະທ້ອນອອກມາຈາກສະຖານນະມັດສະການ. ຢູ່ບ່ອນນັ້ນ, ພວກເຮົາສາມາດເຂົ້າໃຈຢ່າງ ເລິກເຊິ່ງຂຶ້ນ ເຖິງຄວາມເລິກລັບແຫ່ງການຊົ່ວໄຖ່. ສະຫວັນໄດ້ຈ່າຍລາຄາສູງເກີນທີ່ຈະປະເມີນໄດ້ ເພື່ອ ຄວາມລອດພົ້ນຂອງມະນຸດ; ການເສຍສະຫຼະຂອງພຣະອົງພຽງພໍກັບຂໍ້ຮຽກຮ້ອງອັນກວ້າງຂວາງທີ່ສຸດ ຂອງພຣະບັນຍັດຂອງພຣະເຈົ້າທີ່ຖືກລະເມີດ. ພຣະເຢຊູໄດ້ເປີດທາງໄປສູ່ບັນລັງຂອງພຣະບິດາ, ແລະ ໂດຍຜ່ານການເປັນຄົນກາງຂອງພຣະອົງ ຄວາມປາຖະໜາອັນຈິງໃຈຂອງທຸກຄົນທີ່ມາຫາພຣະອົງດ້ວຍ ຄວາມເຊື່ອຈະຖືກນຳສະເໜີຕໍ່ພຣະພັກພຣະເຈົ້າ. {GC 489.1}

“ຜູ້ທີ່ປົກປິດບາບຂອງຕົນຈະບໍ່ຈະເລີນຮຸ່ງເຮືອງ, ແຕ່ຜູ້ທີ່ສາລະພາບບາບ ແລະ ປະຖິ້ມບາບ ນັ້ນຈະໄດ້ຮັບຄວາມເມດຕາ.” (ສຸພາສິດ 28:13 LCV). ຖ້າຜູ້ທີ່ປິດບັງ ແລະ ແກ້ຕົວເລື່ອງ

ຄວາມຜິດຂອງຕົນໄດ້ເຫັນວ່າຊາຕານພໍໃຈຫຼາຍພຽງໃດກັບການກະທຳຂອງພວກເຂົາ ແລະ ເຫັນວິທີທີ່ມັນເອົາການກະທຳເຫຼົ່ານັ້ນມາເຍາะเย้ยพระคริสต์ ແລະ ເຫຼົ່າທູດສະຫວັນບໍຣິສຸດ, ພວກເຂົາຄົງຈະຮີບฟ้าวมาสาละพาบ ແລະ ปะถิ้มบาบเหຼົ່ານັ້ນ. ຊາຕານໃຊ້ຄວາມบົกผ่องในอุปะนิไสของมะนุด ເພື່ອຄວบคุมความคิดทั้งหมดของพวกเขา. ມັນຮູ້ວ່າ ຖ້າຜູ້ໃດยังบ่ยอมปล่อยวางความบົกผ่องเหຼົ່ານັ້ນ ມັນກໍຈະสำเลัดตามจุดปะสงของมัน. ສະนั้น, ມັນจึ่งพะยายามอยู่สะเໝີ ที่จะหลอกลวงผู้ติดตามพระคริสต์ ด้วยคำสอนผิดที่เป็นอันตะลายต่ชีวิดว่า ພวกเขาบ่สามาดเอาะชะนะได้. แต่พระเยซูชิ้อ้อนออนเพื่อพวกเขา โดยชิ้ชี้ให้เห็นพระหัดที่ถืกบาดเจ็บ ແລะ ພระกายที่ฟกช้ำของพระองค์. ພระองค์ชิ้ปะกาดแก่ทุกคนที่ยากติดตามพระองค์ว่า: “ພระคุนของเราก็พຽงพໍแล้วสำลับเจ้า.” (2 โกรินโธ 12:9 LCV). “จงเอาแอกของเราแบกไว้ ແລะ ຮຽนรู้จากเรา ເพาะว่าเราเป็นผู้ใจอ่อนสุพาบ ແລะ ถ่อมลง, แล้วจิดใจของพวกเจ้าจะได้พบความเชาเมื่อย. ເพาะแอกของเรานั้นก็พໍเหมาะ ແລะ พาละของเราก็เบา.” (มัดทาย 11:29, 30 LCV). ดั่งนั้น, ย่าใช้ผู้ใดคิดว่าความบົกผ่องของตนปับปุงบ่ได้. ພระเจ้าจะปะทานความเชื่อ ແລะ ພระคุนเพื่อเอาะชะนะสิ่งเหຼົ່ານັ้น. *{GC 489.2}*

ปัดจุบันนี้, พวกเรากำลังมีชีวิดอยู่ในอันแห่งการลบล้างความบาบอันยิ่งใหย่. ในพิทีกำอันเป็นเงาสันยะลักนั้น, ขะนะที่มะหาปะโรหิดกำลังเรัดการลบล้างความผิดบาบใช้แก่ชนชาดอิดสะราเอน, ทุกคนต้องสำหลวดจิดใจ, มิความเสีาเสยใจต่ความบาบ ແລะ ถ่อมต็วลงต่พระพักองพระผู้เป็นเจ้า; บ่ดั่งนั้น, พวกเขาจะถืกตัดออกจากท่ามกางปะชาชน. เช่นดงวกัน, ในเวลาแห่งการหิดสอบที่เหลืออยู่บ่เท่าใดมื้ ทุกคนที่ยากรักสาชื่อของตนไว้ในทะบຽนแห่งชีวิด ควบจะถ่อมจิดใจของตนลงต่พระพักพระเจ้า ด้วยความเสยใจต่ความบาบ ແລะ การกับใจใหม่อย่างแท้จิง. จะต้องมีการสำหลวดจิดใจอย่างเลิกเชิ่ง ແລะ จิงจัง. ผู้ที่อ้างว่าเป็นคริสตຽนจำนวนหลายที่ใช้ชีวิดแบบผิวเผิน ແລะ เหลาะแหละ จะต้องปะถิ้มนิไสเหຼົ່ານั้นเสย. ทุกคนจะต้องต่สู้อย่างหนัก เพื่อเอาะชะนะความชั่วในใจที่พะยายามลอบงำพวกเขาอยู่. การกຽมพ้อมนี้เป็นวงกางานส่วนต็ว เพาะพวกเราจะบ่ได้ลอดเป็นหมู่คะนะ. ความบໍຣิสุด ແລะ การอุทิดถวายของคนหึ่ง บ่สามาดทิดแทนการที่อีกคนหึ่งขาดคุนสมบัดเหຼົ่านี้. เถิงแม่นว่าทุกชนชาดจะถืกพิพากสาต่พระพักพระเจ้า, แต่พระองค์จะกวดสอบคะดีของแต่ละคนอย่างละอຽดถี่ถ้วน เหมือนกับว่าในโลกนี้มีพຽงแต่ลาวผู้ดຽว. ทุกคนจะต้องถืกหิดสอบ ແລะ จะต้องบ่พบม่นทิน ຫຼື ຮอยด่างพอยอยู่ในต็วเอง. *{GC 489.3}*

การลบล้างความผิดบาบในยุกสุดท้าย เป็นเหดการสำคันที่สุด ແລะ เป็นเสื่องของชะตากำชื่อมิธันดอน. การพิพากสากำลังดำเนินอยู่ในสะถานมะมัดสะการเหิงสะหวัน; วงกางานนี้ได้ดำเนินมาหลายปีแล้อ. ในบ่ช้านี้, การพิพากสาจะมาเถิงคะดีของผู้ที่ยังมีชีวิดอยู่, เถิงแม่นว่า บ่มีผู้ใดรู้ว่าจะมาเถิงไอปานใด. ชีวิดของพวกเราจะถืกพิจาละนาต่พระพักอันซ้าฯยำเกงของพระเจ้า. ในยามนี้ยิ่งกว่าสะไหอื่นใด, ทุกคนถอนเอาใจใส่ต่คำเตือนของพระผู้ช่วยให้ลอดที่ว่า: “จงละมัดละวัง! จงเฝ้าละวังอยู่! พวกเจ้าบ่รู้ว่าเวลานั้นจะมาเถิงเมื่อใด.” (มาระโก 13:33 LCV). “แต่ถ้าพวกเจ้าบ่ตื่นขึ้น, เราจะมาเหมือนดั่งขะโมย ແລะ พวกเจ้าก็จะบ่รู้ว่า เราจะมาหาเจ้าเวลาใด.” (พระนิมิด 3:3 LCV). *{GC 490.1}*

ຊະຕາກຳຂອງທຸກຄົນຖືກຊີ້ຂາດ

ເມື່ອການພິພາກສາແບບສືບສວນສິ້ນສຸດລົງ, ຊະຕາກຳຂອງທຸກຄົນກໍໄດ້ຖືກຕັດສິນຊີ້ຂາດໄປ ແລ້ວວ່າ ຈະໄດ້ຮັບຊີວິດ ຫຼື ຄວາມຕາຍ. ເວລາແຫ່ງພຣະກະລຸນາຈະສິ້ນສຸດລົງໃນໄລຍະສັ້ນ ໆ ກ່ອນທີ່ອົງພຣະຜູ້ເປັນເຈົ້າຈະສະເດັດມາໃນເມກແຫ່ງຟ້າສະຫວັນ. ໃນພຣະທຳພຣະນິມິດ, ພຣະຄຣິສໄດ້ ຊົງເປີດເຜີຍລ່ວງໜ້າກ່ຽວກັບເວລານັ້ນວ່າ: “ຜູ້ໃດທີ່ເຮັດຊົ່ວ ກໍໃຫ້ເຮັດຊົ່ວຕໍ່ໄປ, ຜູ້ໃດທີ່ເປັນຄົນຊົ່ວຊ້າ ກໍ ໃຫ້ເປັນຄົນຊົ່ວຊ້າຕໍ່ໄປ, ຜູ້ໃດທີ່ເປັນຄົນຊອບທຳ ກໍໃຫ້ເຮັດການຊອບທຳຕໍ່ໄປ ແລະ ຜູ້ໃດທີ່ເປັນຄົນ ບໍຣິສຸດ ກໍໃຫ້ເປັນຄົນບໍຣິສຸດຕໍ່ໄປ.” “ເບິ່ງແມ! ເຮົາຈະມາໃນໄວ ໆ ນີ້ ເຮົາຈະເອົາບຳເໜັດຂອງເຮົາ ມານຳ ເພື່ອຕອບແທນຕາມການປະຕິບັດຂອງແຕ່ລະຄົນ.” (ພຣະນິມິດ 22:11, 12). *{GC 490.2}*

ຄົນຊອບທຳ ແລະ ຄົນຊົ່ວຈະຍັງມີຊີວິດຢູ່ໃນໂລກໃນສະພາບມະນຸດທີ່ຕາຍໄດ້. ຄົນທັງຫຼາຍຈະຍັງ ປູກຝັງ ແລະ ກໍ່ສ້າງ, ກິນ ແລະ ດື່ມ ໂດຍບໍ່ຮູ້ວ່າການຕັດສິນຊີ້ຂາດຄັ້ງສຸດທ້າຍ ໄດ້ຖືກປະກາດແລ້ວ ໃນສະຖານນະມັດສະການເທິງສະຫວັນ. ກ່ອນນ້ຳຖ້ວມໂລກ, ຫຼັງຈາກໂນອາເຂົ້າໄປໃນເຮືອ, ພຣະເຈົ້າ ໄດ້ອັດປະຕູໃຫ້ເພິ່ນຢູ່ພາຍໃນ ແລະ ກີດກັນຄົນອະທຳໄວ້ພາຍນອກ. ເປັນເວລາເຈັດມື້ທີ່ຄົນຊົ່ວບໍ່ຮູ້ວ່າ ຊະຕາກຳຂອງຕົນໄດ້ຖືກກຳນົດແລ້ວ. ພວກເຂົາຍັງສືບຕໍ່ໃຊ້ຊີວິດຢ່າງບໍ່ລະມັດລະວັງ, ມ້ວເມົ້າກັບຄວາມ ມ່ວນຊື່ນ ແລະ ເຍາะເຍີ້ຍຄຳເຕືອນເລື່ອງການພິພາກສາທີ່ໃກ້ຈະມາເຖິງ. ອົງພຣະຜູ້ຊ່ວຍໃຫ້ລອດ ຊົງກ່າວວ່າ: “ເມື່ອບຸດມະນຸດມາກໍຈະເປັນດັ່ງນີ້.” (ມັດທາຍ 24:39 LCV). ຊົ່ວໂມງແຫ່ງການ ຕັດສິນຈະມາເຖິງຢ່າງງຽບ ໆ ໂດຍບໍ່ມີໃຜສັງເກດເຫັນ ຄືກັບໂຈນທີ່ຈອບມາໃນຍາມທ່ຽງຄືນ. ມັນຈະ ເປັນເວລາທີ່ກຳນົດຊະຕາກຳຂອງທຸກຄົນ ແລະ ເປັນການສິ້ນສຸດໂອກາດແຫ່ງພຣະກະລຸນາສຳລັບຄົນ ບາບ. *{GC 491.1}*

“ເຫດສະນັ້ນທ່ານທັງຫຼາຍຈົ່ງເຝົ້າລະວັງຢູ່ . . . ຢ້ານວ່າຈະມາໃນທັນທີ ແລະ ພົບທ່ານນອນຫຼັບ ຢູ່.” (ມາຣະໂກ 13:35, 36 LO1972). ຊ່າງເປັນອັນຕະລາຍແທ້ ສຳລັບຜູ້ທີ່ເລີ່ມເມື່ອຍລ້າໃນ ການເຝົ້າຄອຍ ແລ້ວປ່ອຍໃຈໃຫ້ຫຼົງໄຫຼໄປກັບສິ່ງດຶງດູດໃຈຂອງຊາວໂລກ. ໃນຂະນະທີ່ນັກທຸລະກິດ ກຳລັງມົວວົ່ນຢູ່ກັບການຊອກຫາກຳໄລ; ໃນຂະນະທີ່ຄົນມັກຄວາມສຳລານຊອກຫາຄວາມບັນເທີງ; ໃນ ຂະນະທີ່ຍິງສາວທີ່ຫຼົງໄຫຼແຟຊັ່ນກຳລັງຈັດແຈງເຄື່ອງປະດັບຂອງຕົນ; ໃນເວລານັ້ນແຫຼະ, ອາດເປັນຍາມ ທີ່ພຣະຜູ້ພິພາກສາແຫ່ງສາກົນລະໂລກ ຈະຊົງປະກາດຄຳຕັດສິນວ່າ: “ພຣະເຈົ້າໄດ້ຊັ່ງນ້ຳໜັກຂອງ ທ່ານ ແລະ ພົບວ່ານ້ຳໜັກຂອງທ່ານຂາດໄປ.” (ດານີເອນ 5:27 THA-ERV). *{GC 491.2}*

29

ຄວາມຊົ່ວມາແຕ່ໃສ

ການກະບົດເລີ່ມກ່ຕ້ວ

ມີຄົນຈຳນວນຫຼວງຫຼາຍ ທີ່ຮູ້ສຶກສັບສົນເປັນຢ່າງຍິ່ງໃນເລື່ອງຕົ້ນກຳເນີດຂອງຄວາມບາບ ແລະ ສາເຫດທີ່ມີຄວາມບາບຢູ່ໃນໂລກ. ພວກເຂົາເຫັນຜົນຂອງຄວາມຊົ່ວຮ້າຍ ພ້ອມດ້ວຍຄວາມທຸກຂະ-ເວດທະນາ ແລະ ຄວາມເສຍຫາຍທີ່ເກີດຂຶ້ນ, ແລ້ວກໍຖາມຂຶ້ນມາວ່າ ສະພາບດັ່ງກ່າວເປັນໄປໄດ້ ແນວໃດພາຍໃຕ້ການປົກຄອງຂອງພຣະເຈົ້າຜູ້ຊົງມີສະຕິປັນຍາ, ຣິດອຳນາດ ແລະ ຄວາມຮັກອັນ ບໍ່ມີຂອບເຂດຈຳກັດ. ນີ້ເປັນຄວາມເລິກລັບທີ່ພວກເຂົາບໍ່ສາມາດອະທິບາຍໄດ້. ດ້ວຍຄວາມບໍ່ແນ່ໃຈ ແລະ ຄວາມສົງໄສນັ້ນ, ພວກເຂົາຈຶ່ງເບິ່ງບໍ່ເຫັນຄວາມຈິງທີ່ພຣະເຈົ້າຊົງເປີດເຜີຍຢ່າງຈະແຈ້ງ ໃນພຣະຄຳຂອງພຣະອົງ ເຊິ່ງເປັນສິ່ງຈຳເປັນສຳລັບຄວາມລອດ. ບາງຄົນພະຍາຍາມຄົ້ນຫາສິ່ງທີ່ ພຣະເຈົ້າບໍ່ໄດ້ເປີດເຜີຍ ໂດຍຫວັງວ່າຈະຫາສາເຫດທີ່ມີຄວາມບາບໃນໂລກ; ສະນັ້ນ, ພວກເຂົາຈຶ່ງບໍ່ ສາມາດຫາຄຳຕອບໄດ້. ຄົນທີ່ມັກສົງໄສ ແລະ ມີນິໄສຈັບຜິດ ກໍເອົາປະເດັນນີ້ມາເປັນຂໍ້ອ້າງໃນການ ປະຕິເສດພຣະຄຳພີ. ສ່ວນຄົນອື່ນ ກໍບໍ່ໄດ້ພົບຄຳຕອບທີ່ພໍໃຈໃນເລື່ອງສາເຫດທີ່ມີຄວາມຊົ່ວ ຍ້ອນ ວ່າຄວາມເຊື່ອເດີມທີ່ໄດ້ຮັບມາ ແລະ ການຕີຄວາມໝາຍຜິດ ໄດ້ບິດເບືອນຄຳສອນໃນພຣະຄຳພີທີ່ ກ່ຽວກັບພຣະລັກສະນະຂອງພຣະເຈົ້າ, ການປົກຄອງຂອງພຣະອົງ ແລະ ຫຼັກການທີ່ພຣະອົງໃຊ້ໃນ ການຈັດການກັບຄວາມບາບ. *{GC 492.1}*

ເປັນໄປບໍ່ໄດ້ ທີ່ຈະອະທິບາຍຕົ້ນກຳເນີດຂອງຄວາມບາບ ຈົນສາມາດຊີ້ແຈງໃຫ້ເຫັນເຖິງສາເຫດທີ່ມັນ ເກີດຂຶ້ນ. ເຖິງຢ່າງໃດກໍຕາມ, ກໍມີຂໍ້ມູນພຽງພໍກ່ຽວກັບທັງຕົ້ນກຳເນີດ ແລະ ການຈັດການຂັ້ນສຸດທ້າຍ ຂອງຄວາມບາບ ທີ່ຈະພິສູດຢ່າງຈະແຈ້ງເຖິງຄວາມຍຸຕິທຳ ແລະ ພຣະກະລຸນາຂອງພຣະເຈົ້າ ໃນ ການຈັດການກັບຄວາມຊົ່ວຮ້າຍທັງປວງ. ບໍ່ມີສິ່ງໃດທີ່ຖືກສອນຢ່າງແຈ່ມແຈ້ງໃນພຣະຄຳພີຫຼາຍໄປກວ່າ ເລື່ອງນີ້ວ່າ ພຣະເຈົ້າບໍ່ມີສ່ວນກ່ຽວຂ້ອງກັບການກຳເນີດຂອງຄວາມບາບແຕ່ຢ່າງໃດ, ບໍ່ມີການຖອນ ພຣະຄຸນຂອງພຣະອົງໂດຍເລືອກປະຕິບັດ, ບໍ່ມີຄວາມບົກຜ່ອງຂາດເຂີນໃນການປົກຄອງຂອງພຣະອົງ ທີ່ເປີດໂອກາດໃຫ້ການກະບົດອຸບັດຂຶ້ນ. ຄວາມບາບເປັນສິ່ງທີ່ບຸກລຸກເຂົ້າມາ; “ເປັນຫຍັງຈຶ່ງມີຄວາມ ບາບ” ເປັນຄຳຖາມທີ່ບໍ່ມີຄຳຕອບ. ມັນເປັນເລື່ອງເລິກລັບ ບໍ່ມີຄຳອະທິບາຍ; ການແກ້ຕ້ວໃຫ້ກັບຄວາມ ບາບກໍເທົ່າກັບເປັນການປົກປ້ອງມັນ. ຖ້າສາມາດຫາຂໍ້ແກ້ຕ້ວ ຫຼື ຫາສາເຫດຂອງຄວາມບາບໄດ້ ມັນ ກໍຈະບໍ່ແມ່ນຄວາມບາບອີກຕໍ່ໄປ. ພວກເຮົາມີພຽງຄຳນິຍາມດຽວເທົ່ານັ້ນກ່ຽວກັບຄວາມບາບ ຄືສິ່ງທີ່ ພຣະຄຳຂອງພຣະເຈົ້າໄດ້ບອກໄວ້ວ່າ “ບາບແມ່ນການຝ່າຝືນກົດບັນຍັດ (1 ໂຢຮັນ 3:4).” ມັນແມ່ນ ການເຮັດຕາມຫຼັກການທີ່ຕໍ່ສູ້ກັບກົດບັນຍັດອັນຍິ່ງໃຫຍ່ແຫ່ງຄວາມຮັກ ເຊິ່ງເປັນຮາກຖານຂອງການ ປົກຄອງຂອງພຣະເຈົ້າ. *{GC 492.2}*

ກ່ອນຄວາມຊົ່ວຈະເຂົ້າມານັ້ນ ທົ່ວຈັກກະວານລ້ວນມີແຕ່ຄວາມສະຫງົບສຸກ ແລະ ຄວາມຊົມຊື່ນຍິນດີ. ທຸກສິ່ງທຸກຢ່າງສອດຄ່ອງກັບພຣະປະສົງຂອງພຣະຜູ້ສ້າງ. ທຸກຊີວິດລ້ວນແຕ່ຮັກພຣະເຈົ້າເປັນທີ່ໜຶ່ງ ແລະ ມີຄວາມຮັກຕໍ່ກັນຢ່າງຖ້ວນໜ້າ. ພຣະຄຣິສຊົງເປັນພຣະທຳ ແລະ ຊົງເປັນພຣະບຸດອົງດຽວຂອງພຣະເຈົ້າ, ຊົງເປັນອັນໜຶ່ງອັນດຽວກັນກັບພຣະບິດາອົງນິຣັນ ທັງໃນດ້ານທຳມະຊາດ, ພຣະລັກສະນະ ແລະ ພຣະປະສົງ. ພຣະອົງຊົງເປັນຜູ້ດຽວໃນຈັກກະວານທີ່ສາມາດເຂົ້າຮ່ວມໃນການປຶກສາຫາລື ແລະ ໃນພຣະປະສົງທັງໝົດຂອງພຣະເຈົ້າໄດ້. ພຣະບິດາຊົງສ້າງບັນດາຊາວສະຫວັນທັງປວງໂດຍທາງພຣະຄຣິສ. “ໂດຍພຣະອົງນັ້ນພຣະເຈົ້າໄດ້ຊົງສ້າງສັບພະທຸກສິ່ງ ທັງໃນສະຫວັນ ແລະ ເທິງແຜ່ນດິນໂລກ . . . ພຣະທີ່ນັ່ງ ຫຼື ອານຸພາບ ຫຼື ບັນດາຜູ້ຄອບຄອງ ແລະ ບັນດາຜູ້ມີສິດອຳນາດທັງຫຼາຍ ພຣະເຈົ້າໄດ້ສ້າງສັບພະສິ່ງທັງໝົດນີ້ໂດຍທາງພຣະອົງ.” (ໂກໂລຊາຍ 1:16). ທຸກຊີວິດໃນສະຫວັນລ້ວນແຕ່ຖວາຍຄວາມຈົງຮັກພັກດີຕໍ່ພຣະຄຣິສ ແລະ ພຣະບິດາເທົ່າກັນ. *{GC 493.1}*

ກົດບັນຍັດແຫ່ງຄວາມຮັກເປັນຮາກຖານການປົກຄອງຂອງພຣະເຈົ້າ. ຄວາມສຸກຂອງບັນດາຊີວິດທີ່ພຣະອົງຊົງສ້າງນັ້ນຂຶ້ນຢູ່ກັບການປະຕິບັດຕາມຫຼັກການອັນຊອບທຳຂອງກົດບັນຍັດນັ້ນຢ່າງຄົບຖ້ວນ. ພຣະເຈົ້າຊົງປາຖະໜາໃຫ້ຜູ້ທີ່ພຣະອົງຊົງສ້າງ ນະມັດສະການພຣະອົງດ້ວຍຄວາມຮັກ, ຄືໃຫ້ເຄົາລົບນັບຖືພຣະອົງ ເພາະຊາບຊຶ້ງໃນພຣະລັກສະນະຂອງພຣະອົງ. ພຣະອົງບໍ່ພໍພຣະໄທໃນການເຊື່ອຟັງທີ່ເກີດຈາກການຖືກບັງຄັບ; ດັ່ງນັ້ນ, ພຣະອົງຈຶ່ງປະທານເສລີພາບໃນການເລືອກໃຫ້ແກ່ທຸກຄົນ ເພື່ອພວກເຂົາຈະໄດ້ນະມັດສະການ ແລະ ຮັບໃຊ້ພຣະອົງດ້ວຍຄວາມສະໝັກໃຈ. *{GC 493.2}*

ແຕ່ກໍມີຜູ້ໜຶ່ງເລືອກທີ່ຈະນຳໃຊ້ເສລີພາບນັ້ນໃນທາງທີ່ຜິດ. ຄວາມບາບໄດ້ເລີ່ມຂຶ້ນກັບຜູ້ທີ່ໄດ້ຮັບກຽດຈາກພຣະເຈົ້າຮອງລົງມາຈາກພຣະຄຣິສ ຄືຜູ້ທີ່ມີອຳນາດ ແລະ ຣັດສະໝີພາບຫຼາຍທີ່ສຸດທ່າມກາງບັນດາຊາວສະຫວັນ. ກ່ອນທີ່ຈະຫຼົງສູ່ຄວາມບາບ, ລູຊີເຟີເປັນເຄຣຸບຜູ້ພິທັກອົງສຳຄັນທີ່ສຸດ, ເປັນຜູ້ບໍຣິສຸດປາສະຈາກມົນທິນ. “ອົງພຣະຜູ້ເປັນເຈົ້າພຣະເຈົ້າຊົງກ່າວດັ່ງນີ້ວ່າ ເຈົ້າເປັນຕາປະທັບແຫ່ງຄວາມສົມບູນແບບ ເຕັມດ້ວຍສະຕິປັນຍາ ແລະ ມີຄວາມງາມຢ່າງຄົບຖ້ວນ. ເຈົ້າເຄີຍຢູ່ໃນເອເດນ ພຣະອຸທະຍານຂອງພຣະເຈົ້າ, ເພັດພອຍທຸກຢ່າງເປັນເສື້ອຂອງເຈົ້າ . . . ເຈົ້າເປັນເຄຣຸບຜູ້ພິທັກທີ່ໄດ້ເຈີມຕັ້ງໄວ້, ເຮົາໄດ້ຕັ້ງເຈົ້າໄວ້ ເຈົ້າເຄີຍຢູ່ເທິງພູເຂົາບໍຣິສຸດແຫ່ງພຣະເຈົ້າ ແລະ ເຈົ້າເຄີຍເດີນຢູ່ທ່າມກາງສີລາເພີງ. ເຈົ້າກໍປາສະຈາກຕຳໜິໃນວິທີການທັງຫຼາຍຂອງເຈົ້າ ຕັ້ງແຕ່ວັນທີ່ເຈົ້າໄດ້ຖືກສ້າງຂຶ້ນມາ ຈົນພົບຄວາມຊົ່ວໃນຕົວເຈົ້າ.” (ເອເຊກຽນ 28:12–15 ດັດແປງຈາກສະບັບ TKJV). *{GC 493.3}*

ລູຊີເຟີສາມາດເລືອກທີ່ຈະເປັນທີ່ພໍພຣະໄທຂອງພຣະເຈົ້າໄດ້, ມັນສາມາດເລືອກທີ່ຈະເປັນທີ່ຮັກແພງ ແລະ ເປັນທີ່ນັບຖືຂອງບັນດາທູດສະຫວັນທັງປວງ, ໃຊ້ຄວາມສາມາດອັນສູງສົ່ງຂອງຕົນເພື່ອເປັນພຣະພອນ ແລະ ຖວາຍກຽດແດ່ພຣະຜູ້ສ້າງ. ແຕ່ຜູ້ເຜີຍພຣະທຳກ່າວວ່າ: “ເຈົ້າອວດອົ່ງທະນົງຕົວເພາະຮູບຮ່າງອັນສະຫງ່າງາມຂອງເຈົ້າ ແລະ ຊື່ສຽງຂອງເຈົ້າກໍໄດ້ພາໃຫ້ເຈົ້າປະພຶດຕົນດັ່ງຄົນໂງ່ຈ້າ.” (ເອເຊກຽນ 28:17). ລູຊີເຟີປ່ຽນໄປເທື່ອລະເລັກເທື່ອລະໜ້ອຍ ຈົນມັນປາຖະໜາຢາກຍົກຍ້ອງຕົນເອງ. “ເຈົ້າຄິດວ່າເຈົ້າສະຫຼາດເທົ່າທຽມກັບພຣະເຈົ້າ.” “ທ່ານຄິດໃນໃຈວ່າ . . .‘ເຮົາຈະຂຶ້ນໄປເທິງສະຫວັນ ເໜືອດວງດາວຂອງພຣະເຈົ້າ ເຮົາຈະຕັ້ງບັນລັງຂອງເຮົາເທິງບ່ອນສູງ ເຮົາຈະນັ່ງເທິງພູເຂົາແຫ່ງເທບພະເຈົ້າທັງຫຼາຍ . . . ເຮົາຈະຂຶ້ນໄປສູງກວ່າໝູ່ເມກ; ເຮົາຈະຕັ້ງຕົນທຽບເທົ່າພຣະເຈົ້າຜູ້ສູງສຸດ.’” (ເອເຊກຽນ 28:6 NTV; ເອຊາຢາ 14:13, 14 NTV). ແທນທີ່ຈະພະຍາຍາມນຳໃຫ້ຊີວິດທັງປວງທີ່ພຣະເຈົ້າຊົງສ້າງຮັກ ແລະ ຈົງຮັກພັກດີຕໍ່ພຣະເຈົ້າເປັນທີ່ໜຶ່ງ, ລູຊີເຟີພັດຊອກຫາວິທີທີ່ຈະດຶງດູດການ

ຮັບໃຊ້ ແລະ ການເທີດທູນມາສູ່ຕົນເອງ. ດ້ວຍຄວາມໂລບມາກໂລພາຢາກໄດ້ກຽດຕິຍົດທີ່ພຣະບິດາຜູ້ຊົງຣິດອຳນາດສູງສຸດປະທານໃຫ້ແກ່ພຣະບຸດ, ຈອມທູດສະຫວັນອົງນີ້ຈຶ່ງມຸ່ງໝັ້ນທີ່ຈະໄດ້ອຳນາດທີ່ເປັນສິດທິພິເສດສະເພາະຂອງພຣະຄຣິສເທົ່ານັ້ນ. *{GC 494.1}*

ຊາວສະຫວັນທັ້ງປວງຮ່ວມກັນຊົມຊື່ນຍິນດີໃນການສະທ້ອນເຖິງພຣະຣັດສະໝີພາບຂອງພຣະຜູ້ສ້າງ ແລະ ໃນການກ່າວຄຳຍ້ອງຍໍສັນລະເສີນພຣະອົງ. ຕາບໃດທີ່ມີການຖວາຍກຽດແດ່ພຣະເຈົ້າເຊັ່ນນີ້ ຊາວສະຫວັນທັງຫຼາຍມີສັນຕິສຸກ ແລະ ມີຄວາມໜ້າຊື່ນຕາບານທົ່ວໜ້າກັນ. ແຕ່ຄວາມເຫັນແກ່ຕົວ ແລະ ການຍົກຍໍ່ຕົນເອງໄດ້ເຂົ້າມາທຳລາຍຄວາມປອງດອງໃນສະຫວັນ. ສິ່ງເຫຼົ່ານີ້ຂັດແຍ້ງກັບພຣະປະສົງຂອງພຣະຜູ້ສ້າງ ຈຶ່ງເຮັດໃຫ້ຜູ້ທີ່ຖວາຍກຽດແດ່ພຣະເຈົ້າເປັນທີໜຶ່ງ ສັງຫອນໃຈວ່າຈະມີຄວາມຊົ່ວຮ້າຍເກີດຂຶ້ນ. ຊາວສະຫວັນຮ່ວມປະຊຸມຫາລື ເພື່ອຂໍຮ້ອງໃຫ້ລູຊີເຟີປ່ຽນໃຈ. ພຣະບຸດຂອງພຣະເຈົ້າໄດ້ຊີ້ແຈງເຖິງຄວາມຍິ່ງໃຫຍ່, ພຣະຄຸນຄວາມດີ ແລະ ຄວາມຍຸຕິທຳຂອງພຣະຜູ້ສ້າງໃຫ້ລູຊີເຟີຟັງ, ພ້ອມອະທິບາຍເຖິງກົດບັນຍັດອັນສັກສິດຂອງພຣະເຈົ້າທີ່ປ່ຽນແປງບໍ່ໄດ້. ພຣະເຈົ້າຊົງຈັດຕັ້ງລະບຽບຂອງສະຫວັນດ້ວຍພຣະອົງເອງ; ຖ້າລູຊີເຟີປະຖິ້ມລະບຽບນັ້ນ ຈະເຮັດໃຫ້ພຣະເຈົ້າເສຍກຽດ ແລະ ຈະນຳຫາຍະນະມາສູ່ຕົນເອງ. ແຕ່ຄຳເຕືອນທີ່ພຣະບຸດຊົງກ່າວດ້ວຍຄວາມຮັກ ແລະ ພຣະກະລຸນາອັນບໍ່ມີສິ້ນສຸດນັ້ນ ກັບເຮັດໃຫ້ລູຊີເຟີມີຈິດໃຈດື້ດ້ານ. ລູຊີເຟີຍອມໃຫ້ຄວາມອິດສາທີ່ມັນມີຕໍ່ພຣະຄຣິສຄອບງຳຈິດໃຈ, ມັນຈຶ່ງຍິ່ງຕັ້ງໃຈຂັດຂືນຫຼາຍກວ່າເກົ່າ. *{GC 494.2}*

ຄວາມຫຍິ່ງທະນົງໃນສະຫງ່າຣາສີຂອງຕົນເອງ ເຮັດໃຫ້ລູຊີເຟີເກີດຄວາມຢາກເປັນໃຫຍ່. ລູຊີເຟີບໍ່ໄດ້ຖືວ່າກຽດອັນສູງສົ່ງທີ່ມັນໄດ້ຮັບນັ້ນ ເປັນຂອງປະທານຈາກພຣະເຈົ້າ, ມັນຈຶ່ງບໍ່ຮູ້ສຶກຊາບຊຶ້ງໃນພຣະຄຸນຂອງພຣະຜູ້ສ້າງ. ມັນຫຼົງຄວາມຮຸ່ງເຮືອງເຫຼືອງເຫຼື້ອມ ແລະ ກຽດຕິຍົດອັນສູງສົ່ງຂອງຕົນ, ມັນຈຶ່ງປາຖະໜາທີ່ຈະເທົ່າທຽມກັບພຣະເຈົ້າ. ບັນດາທູດສະຫວັນຕ່າງເຄົາລົບຮັກລູຊີເຟີ. ເຫຼົ່າເທບເທວະດາທັງຫຼາຍຍິນດີປະຕິບັດຕາມຄຳສັ່ງຂອງມັນ; ລູຊີເຟີມີສະຕິປັນຍາ ແລະ ສະຫງ່າຣາສີເໜືອຊາວສະຫວັນທັງປວງ. ເຖິງຢ່າງໃດກໍຕາມ, ເປັນທີ່ຮັບຮູ້ທົ່ວໄປວ່າ ພຣະບຸດຂອງພຣະເຈົ້າເປັນຜູ້ຄອບຄອງໃນສະຫວັນ, ຊົງເປັນໜຶ່ງດຽວກັບພຣະບິດາ ທັງໃນເລື່ອງຣິດທານຸພາບ ແລະ ໃນສິດອຳນາດ. ພຣະຄຣິສຊົງມີສ່ວນຮ່ວມໃນພຣະປະສົງທັງໝົດຂອງພຣະເຈົ້າ, ໃນຂະນະທີ່ລູຊີເຟີບໍ່ໄດ້ຮັບອະນຸຍາດໃຫ້ຮັບຮູ້ເຖິງພຣະປະສົງຂອງພຣະອົງ. ທູດສະຫວັນອົງກຽງໄກນີ້ສົງໄສວ່າ “ເປັນຫຍັງພຣະຄຣິສຈຶ່ງມີສິດອຳນາດສູງສຸດ? ເປັນຫຍັງພຣະອົງຈຶ່ງໄດ້ຮັບກຽດສູງກວ່າເຮົາ?” *{GC 495.1}*

ສ້າງຄວາມບໍ່ພໍໃຈ

ລູຊີເຟີອອກຈາກທີ່ປະຈຳການຕໍ່ໜ້າພຣະພັກຂອງພຣະເຈົ້າ ແລະ ໄປເຜີຍແຜ່ຄວາມບໍ່ພໍໃຈທ່າມກາງເຫຼົ່າທູດສະຫວັນ. ມັນເຄື່ອນໄຫວຢ່າງລັບ ໆ ແບບມີເງື່ອນງຳ ແລະ ປິດບັງຈຸດປະສົງທີ່ແທ້ຈິງຂອງຕົນໄວ້ໄລຍະໜຶ່ງ ໂດຍທຳທ່າຄືນັບຖືພຣະເຈົ້າ. ມັນພະຍາຍາມປຸກປັ່ນໃຫ້ເກີດຄວາມບໍ່ພໍໃຈຕໍ່ພຣະບັນຍັດທີ່ໃຊ້ປົກຄອງຊາວສະຫວັນ ໂດຍສະແດງຄວາມຄິດເຫັນວ່າ ພຣະບັນຍັດເຫຼົ່ານັ້ນມີຂໍ້ຈຳກັດທີ່ບໍ່ຈຳເປັນ. ເນື່ອງຈາກທຳມະຊາດຂອງພວກເຂົາບໍຣິສຸດ, ມັນຈຶ່ງຊັກຊວນໃຫ້ທູດສະຫວັນເຊື່ອຟັງໃຈຕົວເອງ. ມັນພະຍາຍາມໃຫ້ເຫຼົ່າທູດສະຫວັນເຫັນອົກເຫັນໃຈ ໂດຍກ່າວຫາວ່າ ພຣະເຈົ້າບໍ່ຍຸຕິທຳຕໍ່ມັນທີ່ປະທານກຽດຕິຍົດອັນສູງສຸດແກ່ພຣະຄຣິສ. ມັນອ້າງວ່າ ການທີ່ມັນຢາກໄດ້ອຳນາດ ແລະ ກຽດຕິຍົດເພີ່ມຂຶ້ນນັ້ນບໍ່ແມ່ນເພື່ອຍົກຍ້ອງຕົນເອງ ແຕ່ເພື່ອປົດປ່ອຍຊາວສະຫວັນທັງປວງ ເພື່ອພວກເຂົາຈະໄດ້ຍົກລະດັບຊີວິດໃຫ້ສູງຂຶ້ນ. *{GC 495.2}*

ພຣະເຈົ້າຊົງອົດກັ້ນຕໍ່ລູຊີເຟ ດ້ວຍພຣະເມດຕາອັນລົ້ນເຫຼືອ. ເມື່ອລູຊີເຟເລີ່ມສະແດງຄວາມບໍ່ພໍໃຈ ພຣະເຈົ້າກໍບໍ່ໄດ້ປົດມັນອອກຈາກຕຳແໜ່ງອັນສູງສົ່ງທັນທີ; ເມື່ອມັນເລີ່ມເຜີຍແຜ່ຄວາມບໍ່ຈິງໃຫ້ແກ່ເຫຼົ່າທູດສະຫວັນທີ່ສັດຊື່ກໍຍັງບໍ່ໄດ້ປົດມັນ; ມັນຍັງຄົງຢູ່ໃນສະຫວັນເປັນເວລາດົນນານ. ຫຼາຍຄັ້ງຫຼາຍຄາວ, ພຣະເຈົ້າຊົງສະເໜີທີ່ຈະອະໄພ ໂດຍມີເງື່ອນໄຂໃຫ້ມັນກັບໃຈ ແລະ ຍອມຈຳນົນ. ພຣະເຈົ້າຊົງໃຊ້ທຸກວິທີທາງ ເພື່ອໃຫ້ມັນເຫັນຄວາມຜິດຂອງຕົນເອງ ເຊິ່ງມີແຕ່ຄວາມຮັກ ແລະ ສະຕິປັນຍາອັນບໍ່ມີຂອບເຂດຈຳກັດເທົ່ານັ້ນ ທີ່ຈະຄິດຫາວິທີເຫຼົ່ານີ້ໄດ້. ກ່ອນໜ້ານີ້ບໍ່ເຄີຍມີຄວາມບໍ່ພໍໃຈເກີດຂຶ້ນໃນສະຫວັນ. ໃນເບື້ອງຕົ້ນ, ລູຊີເຟເອງກໍບໍ່ຮູ້ວ່າຕົນກຳລັງຫຼົງທາງ; ມັນບໍ່ເຂົ້າໃຈສະພາບທີ່ແທ້ຈິງຂອງຄວາມຮູ້ສຶກຂອງຕົນ. ແຕ່ເມື່ອຄວາມບໍ່ພໍໃຈຂອງມັນຖືກພິສູດວ່າບໍ່ມີເຫດຜົນ, ມັນກໍຮູ້ວ່າຕົນຜິດ, ແລະ ຮູ້ວ່າຂໍ້ກຳນົດຂອງພຣະເຈົ້ານັ້ນຍຸຕິທຳ; ມັນຮູ້ຢູ່ແກ່ໃຈວ່າ ມັນຄວນຍອມຮັບສິ່ງເຫຼົ່ານີ້ຕໍ່ໜ້າຊາວສະຫວັນທັງປວງ ເຊິ່ງຖ້າຫາກວ່າລູຊີເຟໄດ້ເຮັດແນວນັ້ນກໍຄົງຊ່ວຍຕົນເອງ ແລະ ທູດສະຫວັນຫຼາຍອົງບໍ່ໃຫ້ພິນາດ. ໃນເວລານັ້ນ, ມັນຍັງບໍ່ທັນໄດ້ປະຖິ້ມຄວາມຈົງຮັກພັກດີຕໍ່ພຣະເຈົ້າທັງໝົດ. ເຖິງແມ່ນວ່າມັນໄດ້ປະຖິ້ມຕຳແໜ່ງເຄຣຸບຜູ້ພິທັກ, ແຕ່ຖ້າມັນຍອມກັບໃຈຄືນມາຫາພຣະເຈົ້າ, ຍອມຮັບສະຕິປັນຍາຂອງພຣະຜູ້ສ້າງ ແລະ ມີຄວາມພໍໃຈໃນຕຳແໜ່ງທີ່ພຣະເຈົ້າກຳນົດໃຫ້ໃນແຜນການອັນຍິ່ງໃຫຍ່ຂອງພຣະອົງ, ມັນກໍຄົງໄດ້ຮັບຕຳແໜ່ງເດີມຄືນມາ. ແຕ່ຄວາມຫຍິ່ງຈອງຫອງເຮັດໃຫ້ມັນບໍ່ຍອມຈຳນົນ. ມັນປົກປ້ອງແນວທາງຂອງຕົນຢ່າງດື້ດ້ານ ໂດຍຢືນຢັນວ່າບໍ່ຈຳເປັນຕ້ອງກັບໃຈ. ຄາວນີ້ລູຊີເຟຕັດສິນໃຈຢ່າງເດັດດ່ຽວທີ່ຈະຕໍ່ສູ້ກັບພຣະຜູ້ສ້າງຂອງຕົນ. {GC 495.3}

ບັດນີ້, ຊາຕານໄດ້ສຸມພະລັງສະຕິປັນຍາອັນຫຼັກແຫຼມທັງໝົດຂອງມັນໃສ່ໃນການຫຼອກລວງ ເພື່ອໃຫ້ບັນດາທູດສະຫວັນທີ່ເຄີຍຢູ່ພາຍໃຕ້ການບັງຄັບບັນຊາຂອງຕົນເຫັນດ້ວຍກັບມັນ. ມັນຍັງບິດເບືອນການທີ່ພຣະຄຣິສຊົງຕັກເຕືອນ ແລະ ໃຫ້ຄຳແນະນຳແກ່ມັນ ເພື່ອເປັນຂໍ້ອ້າງໃນການທໍລະຍົດ. ສຳລັບຜູ້ທີ່ຜູກພັນກັບມັນດ້ວຍຄວາມຮັກ ແລະ ໃຫ້ການໄວ້ເນື້ອເຊື່ອໃຈນັ້ນ ຊາຕານອະທິບາຍວ່າຕົນບໍ່ໄດ້ຮັບຄວາມເປັນທຳ, ບໍ່ໄດ້ຮັບກຽດໃຫ້ສົມກັບຕຳແໜ່ງ ແລະ ກຳລັງຈະຖືກຈຳກັດສິດເສລີພາບ. ມັນເລີ່ມຈາກການບິດເບືອນພຣະຄຳຂອງພຣະຄຣິສ; ຈາກນັ້ນ, ກໍເວົ້າຫຼົບຫຼີກ ແລະ ໃນທີ່ສຸດກໍກ່າວຄວາມເທັດໂດຍກົງ ດ້ວຍການກ່າວຫາພຣະບຸດຂອງພຣະເຈົ້າວ່າ ພຣະອົງຊົງວາງແຜນເຮັດໃຫ້ຕົນອັບອາຍຂາຍໜ້າຕໍ່ໜ້າຊາວສະຫວັນ. ນອກຈາກນັ້ນ, ມັນຍັງປັ້ນແຕ່ງເລື່ອງຂັດແຍ້ງລະຫວ່າງຕົນກັບບັນດາທູດສະຫວັນທີ່ຈົງຮັກພັກດີ. ຜູ້ໃດບໍ່ຍອມເຂົ້າຮ່ວມກັບມັນຢ່າງເຕັມທີ່ ຊາຕານກໍກ່າວຫາວ່າ ຜູ້ນັ້ນບໍ່ສົນໃຈຕໍ່ຄວາມຢູ່ດີມີສຸກຂອງຊາວສະຫວັນ. ຄວາມແຕກແຍກທີ່ເກີດຈາກການເຄື່ອນໄຫວຂອງຕົນ ມັນກັບກ່າວຫາວ່າ ເກີດຈາກເຫຼົ່າທູດສະຫວັນທີ່ຍັງຄົງສັດຊື່ຕໍ່ພຣະເຈົ້າ. ເພື່ອສະໜັບສະໜູນຂໍ້ກ່າວຫາວ່າພຣະເຈົ້າບໍ່ຍຸຕິທຳຕໍ່ຕົນ, ມັນໄດ້ບິດເບືອນພຣະຄຳ ແລະ ການກະທຳຂອງພຣະຜູ້ສ້າງ. ຊາຕານມີອຸບາຍທີ່ຈະເຮັດໃຫ້ພວກທູດສະຫວັນສັບສົນ ດ້ວຍຂໍ້ໂຕ້ຖຽງອັນຊັບຊ້ອນກ່ຽວກັບພຣະປະສົງຂອງພຣະເຈົ້າ. ທຸກສິ່ງທີ່ເຂົ້າໃຈງ່າຍມັນເຮັດໃຫ້ສັບສົນ ແລະ ໃຊ້ການບິດເບືອນຢ່າງມີເລ່ຫຼ່ຽມ ເພື່ອສ້າງຄວາມສົງໄສຕໍ່ຖ້ອຍຄຳອັນຈະແຈ້ງຂອງພຣະເຢໂຮວາ. ຕຳແໜ່ງອັນສູງສົ່ງຂອງມັນທີ່ກ່ຽວຂ້ອງຢ່າງໃກ້ຊິດກັບການປົກຄອງຂອງພຣະເຈົ້າ ເຮັດໃຫ້ຄຳເວົ້າຂອງມັນມີນ້ຳໜັກຫຼາຍ ຈົນທູດສະຫວັນຈຳນວນຫຼວງຫຼາຍຖືກຊັກຈູງໃຫ້ເຂົ້າຮ່ວມໃນການກະບົດຕໍ່ອຳນາດຂອງສະຫວັນ. {GC 496.1}

ກະບົດເຕັມຮູບແບບ

ພຣະເຈົ້າຊົງຍອມໃຫ້ຊາຕານສືບຕໍ່ການເຄື່ອນໄຫວຂອງມັນຈົນຄວາມບໍ່ພໍໃຈນັ້ນເຖິງຂີດສູງສຸດ ແລະ ເກີດການກະບົດໃນທີ່ສຸດ; ທັງນີ້ກໍເປັນໄປຕາມພຣະປັນຍາຂອງພຣະອົງ. ຈຳເປັນຕ້ອງໃຫ້ແຜນການ

ຂອງມັນພັດທະນາຢ່າງເຕັມທີ່ ເພື່ອທຸກຊີວິດຈະໄດ້ເຫັນທາດແທ້ ແລະ ແນວໂນ້ມຂອງມັນ. ລູຊີເຟີ ເຄີຍເປັນເຄຣຸບຜູ້ພິທັກທີ່ໄດ້ຮັບການເຈີມຕັ້ງໄວ້ ແລະ ໄດ້ຮັບກຽດຢ່າງສູງ. ບັນດາຊາວສະຫວັນ ມີຄວາມຮັກຕໍ່ມັນຫຼາຍ ເຮັດໃຫ້ມັນມີພະລັງໂນ້ມນ້າວພວກເຂົາຢ່າງເລິກເຊິ່ງ. ການປົກຄອງຂອງ ພຣະເຈົ້າ ບໍ່ພຽງແຕ່ຮວມເອົາຊາວສະຫວັນເທົ່ານັ້ນ, ແຕ່ຮວມເຖິງຜູ້ທີ່ອາໄສໃນໂລກອື່ນ ໆ ທີ່ພຣະອົງ ຊົງສ້າງດ້ວຍ. ຊາຕານເຊື່ອວ່າ ຖ້າມັນສາມາດຊັກຈູງທູດສະຫວັນໃຫ້ກະບົດກັບມັນໄດ້ ມັນກໍຈະ ສາມາດຊັກນຳຜູ້ທີ່ອາໄສຕາມໂລກອື່ນ ໆ ໄດ້ເຊັ່ນກັນ. ມັນໄດ້ສະເໜີເຫດຜົນຂອງມັນຢ່າງມີເລ່ຫຼ່ຽມ ໂດຍ ນຳໃຊ້ກົນອຸບາຍລໍ້ລວງ ແລະ ຖ້ອຍຄຳທີ່ບິດເບືອນຄວາມຈິງ ເພື່ອຈະໄດ້ບັນລຸຕາມວັດຖຸປະສົງຂອງ ມັນ. ຄວາມສາມາດໃນການຫຼອກລວງຂອງຊາຕານໃຫຍ່ຫຼວງແທ້ ແລະ ມັນໄດ້ປ່ຽນໂດຍການປອມຕົວ ເພື່ອບໍ່ໃຫ້ເຫັນທາດແທ້ຂອງມັນ. ແມ່ນແຕ່ທູດສະຫວັນທີ່ຈົງຮັກພັກດີ ກໍຍັງບໍ່ສາມາດຮູ້ທັນກົນອຸບາຍ ຂອງມັນ ຫຼື ເຫັນວ່າການກະທຳຂອງມັນຈະນຳໄປສູ່ສິ່ງໃດ. *{GC 497.1}*

ຊາຕານໄດ້ຮັບກຽດຢ່າງສູງ ແລະ ການກະທຳທັງໝົດຂອງມັນກໍມີເງື່ອນງຳຢ່າງເລິກລັບ ຈົນ ເປັນເລື່ອງຍາກທີ່ຈະຊີ້ແຈງໃຫ້ທູດສະຫວັນຮູ້ເຖິງທາດແທ້ໃນການເຄື່ອນໄຫວຂອງມັນ. ຄວາມບາບຈະ ບໍ່ປາກົດວ່າເປັນສິ່ງຊົ່ວຮ້າຍ ຈົນກວ່າມັນໄດ້ພັດທະນາເຖິງຈຸດອີ່ມຕົວ. ກ່ອນໜ້ານີ້ບໍ່ເຄີຍມີຄວາມ ບາບໃນຈັກກະວານຂອງພຣະເຈົ້າ, ຜູ້ບໍຣິສຸດທັງຫຼາຍຈຶ່ງບໍ່ຮູ້ຈັກທຳມະຊາດອັນຮ້າຍກາດຂອງຄວາມ ບາບ. ພວກເຂົາບໍ່ສາມາດເຫັນເຖິງຜົນຮ້າຍທີ່ຈະເກີດຂຶ້ນຈາກການປະຖິ້ມກົດບັນຍັດຂອງພຣະເຈົ້າ. ໃນ ຕອນທຳອິດ, ຊາຕານໄດ້ປິດບັງການເຄື່ອນໄຫວຂອງຕົນ ໂດຍການທຳທ່າວ່າຈົງຮັກພັກດີຕໍ່ພຣະເຈົ້າ. ມັນ ອ້າງວ່າຕົນຫາທາງຖວາຍກຽດແດ່ພຣະອົງ; ທັງອ້າງວ່າກຳລັງສະແຫວງຫາຄວາມໝັ້ນຄົງໃຫ້ແກ່ການ ປົກຄອງຂອງພຣະອົງ ແລະ ຄວາມຢູ່ເຢັນເປັນສຸກໃຫ້ກັບຊາວສະຫວັນທັງປວງ. ໃນຂະນະທີ່ປຸກລະດົມ ໃຫ້ເຫຼົ່າທູດສະຫວັນທີ່ຢູ່ພາຍໃຕ້ການບັງຄັບບັນຊາຂອງຕົນເກີດຄວາມບໍ່ພໍໃຈ, ມັນກັບສອນບົດເປັນຜູ້ ແກ້ໄຂບັນຫາຂອງຄວາມບໍ່ພໍໃຈດັ່ງກ່າວ. ເມື່ອມັນສະເໜີໃຫ້ປ່ຽນແປງກົດລະບຽບ ແລະ ກົດບັນຍັດ ຂອງພຣະເຈົ້າທີ່ໃຊ້ໃນການປົກຄອງນັ້ນ, ມັນອ້າງວ່າ ທີ່ຕ້ອງປ່ຽນແປງກໍເພື່ອຮັກສາຄວາມປອງດອງໃນ ສະຫວັນ. *{GC 497.2}*

ໃນການຈັດການກັບຄວາມບາບ, ພຣະເຈົ້າຊົງໃຊ້ແຕ່ຄວາມຊອບທຳ ແລະ ຄວາມຈິງເທົ່ານັ້ນ. ແຕ່ ຊາຕານສາມາດໃຊ້ສິ່ງທີ່ພຣະເຈົ້າບໍ່ສາມາດໃຊ້ໄດ້, ນັ້ນຄືການປະຈົບປະແຈງ ແລະ ການຫຼອກລວງ. ມັນ ພະຍາຍາມປອມແປງພຣະຄຳຂອງພຣະເຈົ້າ ແລະ ບິດເບືອນແຜນການປົກຄອງຂອງພຣະອົງຕໍ່ໜ້າ ບັນດາທູດສະຫວັນ, ໂດຍອ້າງວ່າ ພຣະເຈົ້າບໍ່ຍຸຕິທຳທີ່ອອກກົດບັນຍັດ ແລະ ກົດລະບຽບໃຫ້ແກ່ຊາວ ສະຫວັນ, ພ້ອມທັງເວົ້າວ່າ ການທີ່ພຣະອົງຊົງຮຽກຮ້ອງໃຫ້ຜູ້ທີ່ພຣະອົງຊົງສ້າງຍອມຈຳນົນ ແລະ ເຊື່ອຟັງ ນັ້ນ ແມ່ນເພື່ອຫາທາງຍົກຕົນເອງຂຶ້ນເທົ່ານັ້ນເອງ. ດັ່ງນັ້ນ, ຈຶ່ງຕ້ອງພິສູດໃຫ້ຊາວສະຫວັນ ແລະ ຜູ້ ທີ່ອາໄສຕາມໂລກອື່ນ ໆ ທັງປວງເຫັນວ່າ ການປົກຄອງຂອງພຣະເຈົ້ານັ້ນຍຸຕິທຳ ແລະ ພຣະບັນຍັດ ຂອງພຣະອົງສົມບູນດີພ້ອມ. ຊາຕານໄດ້ເຮັດໃຫ້ເບິ່ງຄືວ່າມັນເອງກຳລັງສົ່ງເສີມໃຫ້ເກີດຜົນດີໃຫ້ແກ່ ຈັກກະວານ. ທຸກຊີວິດຕ້ອງເຂົ້າໃຈລັກສະນະທີ່ແທ້ຈິງຂອງຜູ້ຊ່ວງຊິງອຳນາດຜູ້ນີ້ ແລະ ຈຸດປະສົງຕົວ ຈິງຂອງມັນ. ມັນຈຶ່ງຕ້ອງໄດ້ຮັບເວລາ ເພື່ອສະແດງຕົວຕົນທີ່ແທ້ຈິງຜ່ານການກະທຳອັນຊົ່ວຮ້າຍຂອງ ມັນ. *{GC 498.1}*

ຄວາມແຕກແຍກໃນສະຫວັນທີ່ມັນເປັນຜູ້ກໍ່ຂຶ້ນ ຊາຕານກັບກ່າວໂທດວ່າ ເປັນຍ້ອນກົດບັນຍັດ ແລະ ການປົກຄອງຂອງພຣະເຈົ້າ. ມັນປະກາດວ່າ ຄວາມຊົ່ວຮ້າຍທັງປວງ ແມ່ນໝາກຜົນມາ ຈາກການປົກຄອງຂອງພຣະອົງ ແລະ ອ້າງວ່າ ຈຸດປະສົງຂອງຕົນແມ່ນເພື່ອປັບປຸງກົດລະບຽບຂອງ

ພຣະເຢໂຮວາໃຫ້ດີຂຶ້ນ. ສະນັ້ນ, ຈະຕ້ອງໃຫ້ມັນພິສູດໃຫ້ເຫັນທາດແທ້ຂອງສິ່ງທີ່ມັນອ້າງ ແລະ ສະແດງໃຫ້ເຫັນຜົນທີ່ຈະເກີດຂຶ້ນ ຖ້າປ່ຽນແປງກົດບັນຍັດຂອງພຣະເຈົ້າຕາມທີ່ມັນສະເໜີ. ຈະຕ້ອງໃຫ້ຜົນງານຂອງຊາຕານກ່າວໂທດມັນເອງ. ຊາຕານອ້າງມາຕັ້ງແຕ່ຕົ້ນວ່າ ມັນບໍ່ໄດ້ກະບົດ. ຜູ້ມີຊີວິດທົ່ວຈັກກະວານຈະຕ້ອງໄດ້ເຫັນໜ້າກາກຂອງຈອມຫຼອກລວງຜູ້ນີ້ຖືກຈີກອອກ. *{GC 498.2}*

ເຖິງແມ່ນພຣະເຈົ້າຊົງຕັດສິນວ່າ ຊາຕານຈະຢູ່ໃນສະຫວັນບໍ່ໄດ້ອີກຕໍ່ໄປ, ແຕ່ດ້ວຍພຣະປັນຍາອັນສູງສົ່ງ ພຣະອົງບໍ່ໄດ້ທຳລາຍມັນ. ພຣະເຈົ້າຊົງຍອມຮັບແຕ່ການຮັບໃຊ້ດ້ວຍຄວາມຮັກເທົ່ານັ້ນ; ສະນັ້ນ, ຄວາມຈົງຮັກພັກດີຂອງສັບພະຊີວິດທີ່ພຣະອົງຊົງສ້າງ ຕ້ອງຕັ້ງຢູ່ເທິງຄວາມເຊື່ອໝັ້ນໃນຄວາມຍຸຕິທຳ ແລະ ຄວາມເມດຕາຂອງພຣະອົງ. ໃນເວລານັ້ນ, ຊາວສະຫວັນ ແລະ ຜູ້ອາໄສຢູ່ໂລກອື່ນໆ ຍັງບໍ່ພ້ອມທີ່ຈະເຂົ້າໃຈທຳມະຊາດ ຫຼື ຜົນກະທົບຂອງຄວາມບາບ ຈຶ່ງບໍ່ສາມາດເຫັນຄວາມຍຸຕິທຳ ແລະ ຄວາມເມດຕາຂອງພຣະເຈົ້າໃນການທຳລາຍຊາຕານ. ຖ້າມັນຖືກທຳລາຍທັນທີ, ພວກເຂົາຄົງຮັບໃຊ້ພຣະເຈົ້າດ້ວຍຄວາມຢ້ານກົວ ບໍ່ແມ່ນດ້ວຍຄວາມຮັກ. ອິດທິພົນຂອງຜູ້ຫຼອກລວງຄົງບໍ່ໄດ້ຖືກທຳລາຍຢ່າງສິ້ນເຊີງ ແລະ ແນວຄິດການກະບົດກໍຄົງບໍ່ໄດ້ຖືກກຳຈັດອອກໄປໃຫ້ໝົດສິ້ນ. ຈຳເປັນຕ້ອງປ່ອຍໃຫ້ຄວາມຊົ່ວເຕີບໃຫຍ່ຈົນສຸກເຕັມທີ່. ຈະຕ້ອງປ່ອຍໃຫ້ຊາຕານພັດທະນາຫຼັກການຂອງມັນຈົນເຕັມຮູບແບບ, ທັ້ງນີ້ກໍເພື່ອປະໂຫຍດຂອງຈັກກະວານທັ້ງໝົດຕະຫຼອດຊົ່ວນິຣັນດອນ, ເພື່ອໃຫ້ທຸກຊີວິດທີ່ພຣະເຈົ້າຊົງສ້າງ ຈະໄດ້ເຂົ້າໃຈທາດແທ້ຂອງຂໍ້ກ່າວຫາທີ່ຊາຕານໃສ່ຮ້າຍຕໍ່ການປົກຄອງຂອງພຣະເຈົ້າ ແລະ ເພື່ອບໍ່ໃຫ້ຜູ້ໃດສົງໄສໃນຄວາມຍຸຕິທຳ, ຄວາມເມດຕາ ຫຼື ພຣະບັນຍັດອັນປ່ຽນແປງບໍ່ໄດ້ຂອງພຣະອົງອີກຕໍ່ໄປເປັນນິດ. *{GC 498.3}*

ການກະບົດຂອງຊາຕານເປັນບົດຮຽນຕໍ່ຈັກກະວານໄປຕະຫຼອດການ, ເປັນຫຼັກຖານອັນຖາວອນເຖິງລັກສະນະ ແລະ ຜົນອັນໜ້າຢ້ານກົວຂອງຄວາມບາບ. ການປົກຄອງຂອງຊາຕານກະທົບຕໍ່ມວນມະນຸດ ແລະ ເຫຼົ່າທູດສະຫວັນ ເຊິ່ງສະແດງໃຫ້ເຫັນເຖິງໝາກຜົນຂອງການປະຖິ້ມການປົກຄອງຂອງພຣະເຈົ້າ. ການປົກຄອງຂອງຊາຕານເປັນສິ່ງທີ່ຢືນຢັນວ່າ ຄວາມຢູ່ເຢັນເປັນສຸກຂອງຜູ້ທີ່ພຣະເຈົ້າຊົງສ້າງ ຂຶ້ນຢູ່ກັບພຣະບັນຍັດ ແລະ ການປົກຄອງຂອງພຣະອົງ. ດ້ວຍເຫດນີ້, ປະຫວັດສາດການທົດລອງຂອງການກະບົດອັນໂຫດຮ້າຍນີ້ ຈຶ່ງເປັນເຄື່ອງປ້ອງກັນຕະຫຼອດໄປສຳລັບຜູ້ບໍຣິສຸດທົ່ວຈັກກະວານ ເພື່ອບໍ່ໃຫ້ພວກເຂົາຖືກຫຼອກລວງກ່ຽວກັບລັກສະນະຂອງການລະເມີດ ແລະ ເພື່ອປົກປ້ອງພວກເຂົາຈາກການເຮັດບາບ ແລະ ການຮັບໂທດຂອງບາບນັ້ນ. *{GC 499.1}*

ຈົນເຖິງວາລະສຸດທ້າຍຂອງການຕໍ່ສູ້ໃນສະຫວັນ ຊາຕານກໍຍັງສືບຕໍ່ປົກປ້ອງຕົນເອງ. ເມື່ອມີການປະກາດວ່າ ມັນຈະຕ້ອງຖືກຂັບໄລ່ອອກຈາກສະຫວັນ ພ້ອມດ້ວຍພັກພວກຂອງມັນ, ຜູ້ນຳການກະບົດຈຶ່ງປະກາດຢ່າງອາດຫານວ່າ ຕົນກຳລັງຊັ່ງກົດບັນຍັດຂອງພຣະຜູ້ສ້າງ. ມັນກ່າວຢ້ຳຈຸດຢືນຂອງມັນເອງວ່າ ເຫຼົ່າທູດສະຫວັນບໍ່ຈຳເປັນຕ້ອງມີການຄວບຄຸມ ແຕ່ຄວນປ່ອຍພວກເຂົາໃຫ້ເຮັດຕາມໃຈຕົນເອງ ຍ້ອນວ່າໃຈຂອງພວກເຂົາຈະນຳພາໄປໃນທາງທີ່ຖືກຕ້ອງສະເໝີ. ມັນປະນາມກົດບັນຍັດຂອງພຣະເຈົ້າວ່າ ເປັນສິ່ງທີ່ຈຳກັດສິດເສລີພາບຂອງພວກເຂົາ ແລະ ປະກາດວ່າ ຈຸດປະສົງຂອງຕົນຄືການລົບລ້າງກົດບັນຍັດດັ່ງກ່າວ ຄືຖ້າສາມາດປົດປ່ອຍຊາວສະຫວັນຈາກຂໍ້ຜູກມັດແຫ່ງກົດບັນຍັດນັ້ນແລ້ວ ພວກເຂົາກໍຈະໄດ້ກ້າວເຂົ້າສູ່ສະພາບທີ່ສູງສົ່ງ ແລະ ຮຸ່ງເຮືອງຍິ່ງກວ່າເດີມ. *{GC 499.2}*

ຖືກຂັບໄລ່ອອກຈາກສະຫວັນ

ຊາຕານກັບພັກພວກພາກັນໂຍນຄວາມຜິດໃນການກະບົດທັ້ງໝົດໃສ່ພຣະຄຣິສ ໂດຍປະກາດວ່າ ຖ້າພວກເຂົາບໍ່ໄດ້ຖືກຕຳໜິກໍຈະບໍ່ມີວັນກະບົດ. ດ້ວຍຄວາມດື້ດ້ານ ແລະ ການທ້າທາຍ, ພວກມັນ

ປະຕິເສດທີ່ຈະຈົງຮັກພັກດີຕໍ່ການປົກຄອງຂອງພຣະເຈົ້າ. ພວກມັນພະຍາຍາມໂຄ່ນລົ້ມການປົກຄອງຂອງພຣະເຈົ້າ ແຕ່ຄວາມພະຍາຍາມນັ້ນກໍເປົ່າປະໂຫຍດ. ຢ່າງໃດກໍຕາມ, ພວກມັນຍັງໝິ່ນປະໝາດໂດຍອ້າງວ່າຕົນເປັນເຫຍື່ອຜູ້ບໍຣິສຸດຂອງອຳນາດການກົດຂີ່. ສຸດທ້າຍ, ຈອມກະບົດພ້ອມດ້ວຍພວກທີ່ເຂົ້າຂ້າງມັນທັງໝົດຈຶ່ງຖືກຂັບໄລ່ອອກຈາກສະຫວັນ. *{GC 499.3}*

ແນວຄິດອັນດຽວກັນ ທີ່ກະຕຸ້ນໃຫ້ເກີດການກະບົດໃນສະຫວັນ ຍັງຄົງດົນໃຈການກະບົດຢູ່ໃນໂລກນີ້. ຊາຕານຍັງຄົງສືບຕໍ່ໃຊ້ກົນອຸບາຍກັບມະນຸດ ເໝືອນກັບທີ່ມັນເຄີຍໃຊ້ກັບເຫຼົ່າທູດສະຫວັນ. ແນວຄິດຂອງມັນຍັງຄົງຄອບງຳຄົນທັງຫຼາຍທີ່ບໍ່ເຊື່ອຟັງພຣະເຈົ້າ. ຄົນເຫຼົ່ານີ້ເຮັດຄືຊາຕານ ໂດຍພະຍາຍາມທຳລາຍຂໍ້ຈຳກັດຂອງພຣະບັນຍັດຂອງພຣະເຈົ້າ ແລະ ໃນຂະນະດຽວກັນກໍສັນຍາຕໍ່ຜູ້ຄົນວ່າ ຈະມີເສລີພາບໂດຍຜ່ານການລ່ວງລະເມີດພຣະບັນຍັດນັ້ນ. ການຕັກເຕືອນເລື່ອງຄວາມບາບ ຍັງກະຕຸ້ນໃຫ້ເກີດຄວາມກຽດຊັງ ແລະ ການຕໍ່ຕ້ານ. ເມື່ອມີຄົນຮັບຮູ້ເຖິງຄຳເຕືອນຂອງພຣະເຈົ້າ ຊາຕານກໍພະຍາຍາມນຳພາໃຫ້ຜູ້ນັ້ນແກ້ຕົວ ແລະ ຊອກຫາໃຫ້ຄົນເຫັນອົກເຫັນໃຈໃນເລື່ອງຄວາມບາບຂອງຕົນ. ແທນທີ່ຈະແກ້ໄຂຄວາມຜິດ, ພວກເຂົາກັບປຸກປັ່ນຄວາມຄຽດແຄ້ນຕໍ່ຜູ້ຕັກເຕືອນ ເໝືອນກັບວ່າຜູ້ນັ້ນເປັນຕົ້ນເຫດຂອງບັນຫາທັງໝົດ. ນີ້ແມ່ນແນວຄິດທີ່ຕໍ່ຕ້ານຜູ້ທີ່ກ້າຕັກເຕືອນໃນເລື່ອງຄວາມບາບ ນັບຕັ້ງແຕ່ສະໄໝຂອງອາເບັນຜູ້ຊອບທຳ ຈົນເຖິງສະໄໝຂອງພວກເຮົາ. *{GC 500.1}*

ຊາຕານລໍ້ລວງມະນຸດໃຫ້ທຳບາບ ໂດຍການບິດເບືອນລັກສະນະຂອງພຣະເຈົ້າ ເໝືອນທີ່ມັນເຄີຍເຮັດໃນສະຫວັນ ເພື່ອໃຫ້ຄົນເຂົ້າໃຈຜິດວ່າພຣະເຈົ້າເປັນຜູ້ທີ່ໂຫດຮ້າຍ ແລະ ໃຊ້ອຳນາດຜະເດັດການ. ເມື່ອຊາຕານສຳເລັດເຖິງຂັ້ນນີ້ແລ້ວ ມັນປະກາດວ່າ ຂໍ້ບັງຄັບຂອງພຣະເຈົ້າບໍ່ຍຸຕິທຳ ແລະ ເປັນເຫດໃຫ້ມະນຸດຕົກສູ່ຄວາມບາບ ເຊັ່ນດຽວທີ່ເປັນເຫດຂອງການກະບົດຂອງມັນເອງ. *{GC 500.2}*

ເຖິງຢ່າງນັ້ນກໍຕາມ, ພຣະເຈົ້າອົງນິຣັນດອນກ່າວເຖິງພຣະລັກສະນະຂອງພຣະອົງເອງວ່າ: “ພຣະເຈົ້າ ຢາເວ, ພຣະເຈົ້າຜູ້ເຕັມດ້ວຍຄວາມເມດຕາ ແລະ ພຣະຄຸນ, ບໍ່ຮ້າຍງ່າຍ, ເຕັມໄປດ້ວຍຄວາມຮັກ ແລະ ຄວາມຊື່ສັດ, ຜູ້ສະແດງຄວາມຮັກໝັ້ນຄົງຕໍ່ຄົນເປັນພັນຊົ່ວອາຍຸຄົນ ແລະ ໃຫ້ອະໄພຄວາມຊົ່ວຮ້າຍ, ການກະບົດ ແລະ ບາບ. ແຕ່ພຣະອົງຈະບໍ່ລະເວັ້ນໂທດຜູ້ທີ່ເຮັດຜິດ.” (ອົບພະຍົບ 34:6–7 LCV). *{GC 500.3}*

ໃນການຂັບໄລ່ຊາຕານອອກຈາກສະຫວັນນັ້ນ ພຣະເຈົ້າຊົງປະກາດຄວາມຍຸຕິທຳຂອງພຣະອົງ ແລະ ຊົງຮັກສາກຽດຕິຍົດໃຫ້ແກ່ບັນລັງຂອງພຣະອົງ. ເມື່ອມະນຸດເຮັດບາບໂດຍການຫຼົງຕາມການຫຼອກລວງຂອງຊາຕານ, ພຣະເຈົ້າຊົງພິສູດຄວາມຮັກຂອງພຣະອົງ ໂດຍຊົງຍອມໃຫ້ພຣະບຸດອົງດຽວຂອງພຣະອົງ ສິ້ນພຣະຊົນເພື່ອມະນຸດສະໂລກຜູ້ຫຼົງຜິດ. ການຊົງໄຖ່ມະນຸດຈາກຄວາມບາບ ໄດ້ເປີດເຜີຍພຣະລັກສະນະຂອງພຣະເຈົ້າ. ໄມ້ກາງແຂນຂອງພຣະຄຣິສ ເປັນຂໍ້ພິສູດອັນໜັກແໜ້ນໃຫ້ແກ່ຈັກກະວານທັງໝົດວ່າ ການປົກຄອງຂອງພຣະເຈົ້າບໍ່ໄດ້ເປັນເຫດໃຫ້ລູຊີເຟີເລືອກທາງແຫ່ງຄວາມບາບ. *{GC 500.4}*

ການຕໍ່ສູ້ລະຫວ່າງພຣະຄຣິສກັບຊາຕານ ທີ່ເກີດຂຶ້ນຕະຫຼອດໄລຍະເວລາທີ່ພຣະອົງຊົງປະຕິບັດພາລະກິດຂອງພຣະອົງໃນໂລກ ໄດ້ເປີດເຜີຍໃຫ້ເຫັນທາດແທ້ຂອງຈອມຫຼອກລວງ. ຄວາມໂຫດຫ້ຽມຂອງຊາຕານໃນການຕໍ່ສູ້ພຣະຜູ້ໄຖ່ຂອງໂລກ ເປັນສາເຫດຫຼັກທີ່ເຮັດໃຫ້ເຫຼົ່າທູດສະຫວັນ ແລະ ຜູ້ຈົງຮັກພັກດີຕໍ່ພຣະເຈົ້າໃນຈັກກະວານ ໝົດຄວາມເຫັນອົກເຫັນໃຈຕໍ່ຊາຕານ. ທົ່ວທັງຈັກກະວານພາກັນຕົກຕະລຶງເມື່ອເຫັນພຶດຕິກຳຂອງຊາຕານ ທີ່ກ້າໝິ່ນປະໝາດໂດຍການຮຽກຮ້ອງໃຫ້ພຣະຄຣິສຂາບໄຫວ້ມັນ, ທັງການທີ່ມັນບັງອາດນຳພາພຣະອົງຂຶ້ນໄປຍັງຈອມພູ ແລະ ຍອດພຣະວິຫານ; ຄວາມ

ເຈດຕະນາຮ້າຍທີ່ຮຸກຮ້ອງໃຫ້ພຣະອົງໂດດລົງໄປ, ການໄລ່ລ່າພຣະຄຣິສດ້ວຍຄວາມມຸ່ງຮ້າຍທີ່ບໍ່ຢຸດບໍ່ເຊົາ ແລະ ການດົ່ນໃຈພວກປະໂຣຫິດກັບປະຊາຊົນໃຫ້ປະຕິເສດຄວາມຮັກຂອງພຣະອົງ ຈົນໃນທີ່ສຸດໄດ້ຮ້ອງຂຶ້ນວ່າ, “ຄຶງໄວ້ທີ່ໄມ້ກາງແຂນ! ຄຶງໄວ້ທີ່ໄມ້ກາງແຂນ!” ທັງໝົດນີ້ເຮັດໃຫ້ຜູ້ມີຊີວິດທົ່ວຈັກກະວານຕົກໃຈ ແລະ ໂກດຮ້າຍຊາຕານ. {GC 501.1}

ແມ່ນຊາຕານນັ້ນເອງທີ່ຊຸກຍູ້ໃຫ້ມະນຸດປະຕິເສດພຣະຄຣິສ. ເຈົ້າແຫ່ງຄວາມຊົ່ວຮ້າຍໄດ້ໃຊ້ກຳລັງ ແລະ ສະຕິປັນຍາທັງໝົດຂອງມັນ ເພື່ອທຳລາຍພຣະເຢຊູ, ເພາະມັນເຫັນວ່າຄວາມເມດຕາ ແລະ ຄວາມຮັກຂອງພຣະຜູ້ຊ່ວຍໃຫ້ລອດ ທັງຄວາມເຫັນອົກເຫັນໃຈ ແລະ ຄວາມອ່ອນໂຍນຂອງພຣະອົງ ກຳລັງເປີດເຜີຍໃຫ້ມະນຸດເຫັນເຖິງພຣະລັກສະນະຂອງພຣະເຈົ້າ. ຊາຕານໂຕ້ແຍ້ງກັບທຸກປະເດັນທີ່ພຣະບຸດຂອງພຣະເຈົ້າຊົງກ່າວ ທັງສົ່ງຕົວແທນໄປເພື່ອເຮັດໃຫ້ຊີວິດຂອງພຣະອົງເຕັມໄປດ້ວຍຄວາມທຸກໂສກ. ຄວາມຢາກແກ້ແຄ້ນຝັງເລິກໃນໃຈຂອງຊາຕານ ຈົນສະແດງອອກເປັນຄວາມງຽດຊັງຜ່ານຄົນທັງຫຼາຍທີ່ບໍ່ເຊື່ອຟັງ; ມັນຜູກໃຈເຈັບຈົນໃຊ້ແຜນອຸບາຍ ແລະ ຄວາມບໍ່ຈິງ ເພື່ອຂັດຂວາງວຽກງານຂອງພຣະເຢຊູ; ນອກຈາກນັ້ນ, ມັນຍັງກ່າວໂທດພຣະອົງຢ່າງໂຫດຮ້າຍ ແມ່ນວ່າຊີວິດຂອງພຣະອົງລ້ວນແຕ່ສະແດງເຖິງຄວາມດີອັນບໍ່ມີຜູ້ໃດປຽບປານ. ຄວາມອິດສາ, ຄວາມງຽດຊັງ ແລະ ຄວາມຄັບແຄ້ນແໜ້ນໃຈເປັນດັ່ງໄຟທີ່ເຜົາຜານຢູ່ໃນໃຈຂອງຊາຕານ ຈົນມັນພຸ່ງອອກໃສ່ພຣະບຸດຂອງພຣະເຈົ້າທີ່ໄມ້ກາງແຂນແຫ່ງຄານວາຣີ, ໃນຂະນະທີ່ຊາວສະຫວັນທັງປວງແນມເບິ່ງດ້ວຍຄວາມສະທ້ານໃຈ. {GC 501.2}

ຫຼັງຈາກທີ່ພຣະຄຣິສສະຫຼະພຣະຊົນຂອງພຣະອົງເພື່ອເປັນເຄື່ອງໄຖ່ບາບແລ້ວ ພຣະອົງສະເດັດຂຶ້ນສະຫວັນ, ແຕ່ບໍ່ຍອມຮັບການເທີດທູນຂອງເຫຼົ່າທູດສະຫວັນຈົນກວ່າພຣະອົງຈະໄດ້ຂໍຕໍ່ພຣະບິດາວ່າ: “ເຊິ່ງພຣະອົງຊົງປະທານໃຫ້ແກ່ຂ້ານ້ອຍນັ້ນ ຂ້ານ້ອຍກໍປາຖະໜາ ຢາກໃຫ້ເຂົາຢູ່ກັບຂ້ານ້ອຍໃນບ່ອນເຊິ່ງຂ້ານ້ອຍຢູ່ນັ້ນເໝືອນກັນ.” (ໂຢຮັນ 17:24 LO1972). ແລ້ວມີພຣະສຸຣະສຽງອັນເຕັມໄປດ້ວຍຄວາມຮັກ ແລະ ຣິດທານຸພາບຕອບຈາກບັນລັງຂອງພຣະບິດາວ່າ: “ໃຫ້ບັນດາເທວະດາຂອງພຣະເຈົ້າທຸກຕົນ ຕ້ອງນ້ອມນະມັດສະການຂາບໄຫວ້ພຣະອົງ.” (ເຮັບເຣີ 1:6). ບໍ່ມີຮອຍເປື້ອນຢູ່ເທິງພຣະເຢຊູ. ຄວາມອັບອາຍຂອງພຣະອົງໄດ້ສິ້ນສຸດລົງ, ການເສຍສະຫຼະຂອງພຣະອົງໄດ້ສຳເລັດແລ້ວ, ພຣະອົງຈຶ່ງໄດ້ຮັບພຣະນາມເໜືອນາມຊື່ທັງປວງ. {GC 501.3}

ບັດນີ້ຄວາມຜິດຂອງຊາຕານປະຈັກແຈ້ງໂດຍບໍ່ມີຂໍ້ແກ້ຕົວ. ມັນໄດ້ເປີດເຜີຍທາດແທ້ຂອງຕົນ ໃນຖານະຜູ້ຂີ້ຕົວະ ແລະ ຄາຕະກອນ. ທຸກຊີວິດເຫັນໄດ້ວ່າ ຖ້າຊາຕານໄດ້ຮັບອະນຸຍາດໃຫ້ປົກຄອງຊາວສະຫວັນ ມັນກໍຈະໃຊ້ແນວຄິດອັນດຽວກັນ ທີ່ມັນໃຊ້ໃນການປົກຄອງມະນຸດຜູ້ຢູ່ໃຕ້ອຳນາດຂອງມັນ. ຊາຕານອ້າງວ່າ ການລ່ວງລະເມີດກົດບັນຍັດຂອງພຣະເຈົ້າຈະນຳເອົາເສລີພາບ ແລະ ສະພາບທີ່ສູງສົ່ງມາໃຫ້; ແຕ່ຜົນທີ່ປາກົດແມ່ນການເປັນທາດ ແລະ ຄວາມເສື່ອມໂຊມ. {GC 502.1}

ຂໍ້ກ່າວຫາຂອງຊາຕານທີ່ກ່າວຮ້າຍພຣະລັກສະນະຂອງພຣະເຈົ້າ ແລະ ການປົກຄອງຂອງພຣະອົງ ກໍປາກົດວ່າບໍ່ເປັນຄວາມຈິງ. ມັນໄດ້ກ່າວຫາພຣະເຈົ້າວ່າ ການທີ່ພຣະອົງຊົງຮຽກຮ້ອງໃຫ້ຜູ້ທີ່ພຣະອົງຊົງສ້າງນັ້ນຍອມເຊື່ອຟັງ ແລະ ຢູ່ໃຕ້ການປົກຄອງຂອງພຣະອົງ ກໍເພາະພຣະອົງຕ້ອງການໃຫ້ມີຄົນຍ້ອງຍໍສັນລະເສີນເທົ່ານັ້ນ. ມັນຍັງປະກາດອີກວ່າ ໃນຂະນະທີ່ພຣະຜູ້ສ້າງຊົງຮຽກຮ້ອງໃຫ້ຄົນອື່ນເສຍສະຫຼະ ແຕ່ພຣະອົງເອງບໍ່ເຄີຍເສຍສະຫຼະ ຫຼື ປະຕິເສດຕົນເອງເລີຍ. ບັດນີ້ໄດ້ປະຈັກແຈ້ງວ່າ ພຣະເຈົ້າຜູ້ຊົງຄອບຄອງຈັກກະວານຊົງເສຍສະຫຼະດ້ວຍຄວາມຮັກ ອັນເປັນການເສຍສະຫຼະທີ່ຍິ່ງໃຫຍ່ທີ່ສຸດ ເພື່ອຊ່ວຍມະນຸດຜູ້ຫຼົງຜິດໃຫ້ໄດ້ຮັບຄວາມລອດ. ດ້ວຍວ່າ, “ພຣະເຈົ້າຜູ້ຊົງສະຖິດຢູ່ໃນອົງພຣະຄຣິສ ໄດ້ຊົງກະທຳໃຫ້ມະນຸດຄືນດີກັນກັບພຣະອົງ.” (2 ໂກຣິນໂທ 5:19 LO1972). ນອກຈາກນັ້ນ, ກໍຍັງເຫັນໄດ້ວ່າ ການທີ່ລູຊີເຟີປາຖະໜາກຽດຕິຍົດ ແລະ ອຳນາດສູງສຸດກໍໄດ້ເປີດປະຕູໃຫ້ຄວາມ

ບາບເຂົ້າມາ; ແລະຍັງເຫັນວ່າ ທີ່ພຣະຄຣິສຊົງຖ່ອມພຣະອົງລົງ ແລະ ຊົງເຊື່ອຟັງຈົນເຖິງຄວາມຕາຍກໍ ເພື່ອທຳລາຍຄວາມບາບນັ້ນເອງ. {GC 502.2}

ການສິ້ນພຣະຊົນຂອງພຣະຄຣິສຊະນະຂໍ້ໂຕ້ແຍ້ງ

ພຣະເຈົ້າຊົງສະແດງຄວາມກຽດຊັງຕໍ່ຫຼັກການຂອງການກະບົດ. ທົ່ວທັງສະຫວັນໄດ້ເຫັນຄວາມ ຍຸຕິທຳຂອງພຣະອົງປາກົດຢູ່ໃນການກ່າວໂທດຊາຕານ ແລະ ໃນການໄຖ່ມະນຸດໃຫ້ລອດ. ທີ່ຜ່ານ ມາ, ລູຊີເຟີເຄີຍປະກາດວ່າຖ້າກົດບັນຍັດຂອງພຣະເຈົ້າປ່ຽນແປງບໍ່ໄດ້ ແລະ ບໍ່ມີການຍົກໂທດ, ສະແດງ ວ່າທຸກຄົນທີ່ລະເມີດຕໍ່ກົດບັນຍັດນັ້ນ ຈະຕ້ອງຖືກຕັດຂາດຈາກການເປັນທີ່ພໍພຣະໄທຂອງພຣະຜູ້ສ້າງ ຕະຫຼອດໄປ. ມັນອ້າງວ່າ ມະນຸດສະໂລກທີ່ຫຼົງໃນຄວາມບາບນັ້ນບໍ່ສາມາດໄຖ່ຄືນໄດ້; ສະນັ້ນ, ມັນຈຶ່ງບໍ່ ມີຄວາມຜິດທີ່ຖືວ່າມະນຸດເປັນເຫຍື່ອຂອງຕົນ. ແຕ່ການສິ້ນພຣະຊົນຂອງພຣະຄຣິສ ເປັນຂໍ້ໂຕ້ແຍ້ງເພື່ອ ມະນຸດທີ່ຊາຕານບໍ່ສາມາດລົ້ມລ້າງໄດ້. ການລົງໂທດຕາມກົດບັນຍັດ ໄດ້ຕົກໃສ່ພຣະຄຣິສ ຜູ້ຊົງສະພາບ ເທົ່າທຽມກັບພຣະເຈົ້າ; ມະນຸດຈຶ່ງເປັນອິດສະຫຼະທີ່ຈະຮັບເອົາຄວາມຊອບທຳຂອງພຣະຄຣິສ. ແລ້ວໂດຍ ຊີວິດທີ່ສຳນຶກໃນຄວາມບາບ ແລະ ຖ່ອມຕົວລົງ, ມະນຸດຈະສາມາດມີໄຊຊະນະເໜືອອຳນາດຂອງ ຊາຕານ ເໝືອນດັ່ງພຣະບຸດຂອງພຣະເຈົ້າຊົງມີໄຊຊະນະ. ດັ່ງນັ້ນ, ພຣະເຈົ້າຊົງເປັນຜູ້ຊອບທຳ “ແລະ ເປັນຜູ້ທີ່ເຮັດໃຫ້ບັນດາຄົນທີ່ມີຄວາມເຊື່ອໃນພຣະເຢຊູເຈົ້າ ຖືກນັບວ່າເປັນຜູ້ຊອບທຳດ້ວຍ.” (ໂຣມ 3:26 LCV). {GC 502.3}

ພຣະຄຣິສບໍ່ໄດ້ສະເດັດມາໃນໂລກ ແລະ ຮັບຄວາມທຸກທໍລະມານຈົນເຖິງຄວາມຕາຍ ເພື່ອໄຖ່ ມະນຸດພຽງຢ່າງດຽວເທົ່ານັ້ນ. ພຣະອົງຍັງສະເດັດມາເພື່ອ “ເຊີດຊູກົດບັນຍັດ ແລະ ເຮັດໃຫ້ກົດບັນຍັດ ນັ້ນມີກຽດ.” (ເອຊາຢາ 42:21). ພຣະອົງຊົງສຳແດງໃຫ້ເຫັນວ່າ ກົດບັນຍັດຂອງພຣະເຈົ້າປ່ຽນແປງບໍ່ ໄດ້, ບໍ່ແມ່ນເພື່ອໃຫ້ມະນຸດໃນໂລກນີ້ເຂົ້າໃຈກົດບັນຍັດໃຫ້ຖືກຕ້ອງເທົ່ານັ້ນ ແຕ່ເພື່ອເປີດເຜີຍຄວາມຈິງ ນີ້ ແກ່ຜູ້ທີ່ອາໄສໃນໂລກອື່ນໆອີກດ້ວຍ. ຖ້າກົດບັນຍັດສາມາດປ່ຽນແປງໄດ້ ພຣະບຸດຂອງພຣະເຈົ້າ ກໍບໍ່ຈຳເປັນຕ້ອງສະຫຼະພຣະຊົນ ເພື່ອຊົດໃຊ້ການລ່ວງລະເມີດຂອງມະນຸດ. ການສິ້ນພຣະຊົນຂອງ ພຣະຄຣິສພິສູດວ່າກົດບັນຍັດປ່ຽນແປງບໍ່ໄດ້. ຄວາມຮັກອັນບໍ່ມີຂອບເຂດທີ່ກະຕຸ້ນໃຫ້ພຣະບິດາ ແລະ ພຣະບຸດເສຍສະຫຼະເພື່ອໄຖ່ບາບຂອງມະນຸດ ໄດ້ສຳແດງແກ່ທຸກຊີວິດໃນຈັກກະວານໃຫ້ເຫັນວ່າ ຄວາມ ຍຸຕິທຳ ແລະ ພຣະເມດຕາເປັນຮາກຖານແຫ່ງກົດບັນຍັດ ແລະ ການປົກຄອງຂອງພຣະເຈົ້າ ເຊິ່ງມີ ແຕ່ແຜນການຊົງໄຖ່ມະນຸດໃຫ້ລອດທີ່ສາມາດສະແດງເຖິງເລື່ອງດັ່ງກ່າວໄດ້. {GC 503.1}

ເມື່ອການລົງໂທດຕາມການພິພາກສາສິ້ນສຸດລົງ ຈະປາກົດໃຫ້ເຫັນວ່າ ບໍ່ມີຄຳແກ້ຕົວໃຫ້ກັບ ຄວາມບາບ. ເມື່ອພຣະເຈົ້າຜູ້ພິພາກສາສາກົນລະໂລກຈະຖາມຊາຕານວ່າ, “ເປັນຫຍັງເຈົ້າຈຶ່ງກະບົດຕໍ່ ເຮົາ ແລະ ລັກພາໄພ່ພົນຈາກອານາຈັກຂອງເຮົາໄປ?” ຊາຕານຜູ້ເປັນຕົ້ນກຳເນີດຂອງຄວາມຊົ່ວຈະບໍ່ມີ ຄຳຕອບ. ປາກຂອງທຸກຄົນຈະປິດງຽບ ແລະ ພວກກະບົດທັງຫຼາຍຈະເວົ້າບໍ່ອອກ. {GC 503.2}

ການສິ້ນພຣະຊົນຂອງພຣະຄຣິສເທິງໄມ້ກາງແຂນແຫ່ງຄານວາຣີ ປະກາດວ່າ ພຣະບັນຍັດຂອງ ພຣະເຈົ້າປ່ຽນແປງບໍ່ໄດ້; ແລະຍັງປະກາດແກ່ທຸກຊີວິດໃນຈັກກະວານວ່າ ຄ່າຈ້າງຂອງຄວາມບາບຄື ຄວາມຕາຍ. ພຣະຜູ້ຊ່ວຍໃຫ້ລອດຊົງຮ້ອງຂຶ້ນໃນຂະນະທີ່ກຳລັງສິ້ນໃຈວ່າ: “ສຳເລັດແລ້ວ.” ຄຳຮ້ອງນີ້ ເປັນໝາຍສຳຄັນວ່າ ຊາຕານຈະຕ້ອງຕາຍ. ການຕໍ່ສູ້ລະຫວ່າງຊາຕານກັບພຣະເຈົ້າ ທີ່ດຳເນີນມາເປັນ ເວລາດົນນານ ກໍໄດ້ຖືກຕັດສິນຊີ້ຂາດໃນຕອນນັ້ນ. ຕັ້ງແຕ່ນັ້ນມາຈຶ່ງເປັນທີ່ແນ່ນອນວ່າ ຄວາມຊົ່ວຮ້າຍ ຈະຖືກລຶບລ້າງໄປຢ່າງສິ້ນເຊີງໃນທີ່ສຸດ. ພຣະບຸດຂອງພຣະເຈົ້າໄດ້ຜ່ານຄວາມຕາຍ ເພື່ອວ່າ “ໂດຍ

ທາງຄວາມຕາຍນັ້ນ ພຣະອົງຈະໄດ້ຊົງທຳລາຍຜູ້ທີ່ມີອຳນາດແຫ່ງຄວາມຕາຍ ຄືມານຮ້າຍ.” (ເຮັບເຣີ 2:14). ຄວາມປາຖະໜາຂອງລູຊີເຟີ ທີ່ຢາກໄດ້ຮັບການຍົກຍ້ອງເຊີດຊູນັ້ນ ເປັນເຫດໃຫ້ມັນກ່າວ ວ່າ: “ຂ້ອຍຈະ . . . ຕັ້ງບັນລັງຂອງຂ້ອຍໄວ້ໃນທີ່ສູງສຸດ ເໜືອດວງດາວຕ່າງ ໆ . . . ຂ້ອຍຈະຕ້ອງ . . . ເປັນ ດັ່ງອົງຊົງຣິດອຳນາດຍິ່ງໃຫຍ່.” (ເອຊາຢາ 14:13, 14). ພຣະເຈົ້າຊົງປະກາດວ່າ: “ເຮົາຈະກະທຳ ໃຫ້ເຈົ້າເປັນເທົ້າຖ່ານໄປເທິງແຜ່ນດິນໂລກ . . . ເຈົ້າຈະສິ້ນສູນລົງ . . . ແລະຈະບໍ່ດຳລົງຢູ່ອີກຕໍ່ໄປເປັນ ນິດ.” (ເອເຊກຽນ 28:18, 19 TKJV). ພຣະເຢໂຮວາພຣະເຈົ້າອົງຊົງຣິດອຳນາດຍິ່ງໃຫຍ່ຊົງກ່າວ ວ່າ: “ວັນນັ້ນແຫຼະກຳລັງຈະມາເຖິງ, ມັນຈະຮ້ອນດັ່ງເຕົາອົບ, ຜູ້ຫຍິ່ງຍະໂສ ແລະ ຜູ້ຊົ່ວຮ້າຍ ທັງປວງຈະເປັນເຟືອງ; ແລະວັນນັ້ນກຳລັງຈະມາເຖິງ ເຊິ່ງຈະເຜົາພວກເຂົາໃຫ້ລຸກເປັນໄຟ . . . ຈະບໍ່ມີ ຮາກ ຫຼື ກິ່ງກ້ານເຫຼືອຢູ່.” (ມາລາກີ 4:1 ດັດແປງຈາກສະບັບ NTV). *{GC 503.3}*

ໃນຄາວສຸດທ້າຍນັ້ນ, ຈັກກະວານທັງໝົດຈະເປັນພະຍານເຖິງທາດແທ້ ແລະ ຜົນຂອງຄວາມ ບາບ. ຖ້າພຣະເຈົ້າໄດ້ກຳຈັດຄວາມບາບຢ່າງສິ້ນເຊີງຕັ້ງແຕ່ຕົ້ນ ກໍຄົງເປັນເຫດໃຫ້ເຫຼົ່າທູດສະຫວັນ ຢ້ານກົວ ແລະ ບໍ່ຖວາຍກຽດແດ່ພຣະອົງ. ແຕ່ເມື່ອສິ້ນສຸດການພິພາກສາລົງໂທດຄວາມບາບນັ້ນ ທຸກຊີວິດໃນຈັກກະວານທີ່ເຮັດຕາມນ້ຳພຣະໄທຂອງພຣະເຈົ້າດ້ວຍຄວາມຊົມຊື່ນຍິນດີ ຄືບັນດາຜູ້ທີ່ມີ ກົດບັນຍັດຂອງພຣະອົງຈາລຶກໄວ້ໃນໃຈ ຈະເຫັນວ່າການທຳລາຍຄວາມບາບນັ້ນ ເປັນໄປຕາມຄວາມ ຮັກຂອງພຣະເຈົ້າ ແລະ ຈະສະຖາປະນາພຣະກຽດຂອງພຣະອົງໄວ້ຢ່າງໝັ້ນຄົງຕະຫຼອດໄປ. ຄວາມ ຊົ່ວຈະບໍ່ເກີດຂຶ້ນອີກຕໍ່ໄປ. ພຣະຄຳຂອງພຣະເຈົ້າກ່າວວ່າ: “ຄວາມທຸກຍາກຈະບໍ່ປາກົດຂຶ້ນເປັນຄັ້ງ ທີສອງ.” (ນາຮູມ 1:9 THSV). ຊາຕານຫາວ່າກົດບັນຍັດຂອງພຣະເຈົ້າເປັນແອກແຫ່ງການເປັນ ທາດ, ແຕ່ສຸດທ້າຍກົດບັນຍັດນັ້ນ ຈະໄດ້ຮັບກຽດໃນຖານະກົດແຫ່ງເສລີພາບ. ເມື່ອທຸກຊີວິດໄດ້ຜ່ານ ການທົດສອບ ແລະ ໄດ້ຮັບການພິສູດແລ້ວ, ພວກເຂົາກໍຈະບໍ່ມີວັນໄດ້ປະຖິ້ມຄວາມຈົງຮັກພັກດີຕໍ່ ພຣະເຈົ້າອີກ ເພາະຄວາມຮັກອັນບໍ່ມີສິ້ນສຸດ ແລະ ສະຕິປັນຍາອັນບໍ່ມີຂອບເຂດຈຳກັດຂອງພຣະອົງ ໄດ້ ປາກົດຕໍ່ໜ້າພວກເຂົາຢ່າງເຕັມບໍຣິບູນແລ້ວ. *{GC 504.1}*

30

ຄວາມກຽດຊັງລະຫວ່າງມະນຸດກັບຊາຕານ

ກຳລັງໃນການຕ້ານທານຊາຕານ

“ເຮົາຈະໃຫ້ເຈົ້າກັບຜູ້ຍິງເປັນສັດຕູກັນ ແລະ ເຊື້ອສາຍຂອງເຈົ້າກັບເຊື້ອສາຍຂອງຜູ້ຍິງເປັນສັດຕູກັນ. ເຊື້ອສາຍຂອງຜູ້ຍິງຈະຢຽບຫົວເຈົ້າໃຫ້ແຕກ ແລະ ເຈົ້າຈະທຳໃຫ້ສົ້ນຕີນເພິ່ນບວມຊ້ຳໄປ.” (ປະຖົມມະການ 3:15 ສະບັບລາວບູຮານ). ຄຳພີພາກສາຂອງພຣະເຈົ້າທີ່ກ່າວໂທດຊາຕານ ຫຼັງຈາກມະນຸດຫຼົງສູ່ຄວາມບາບນັ້ນ ຍັງເປັນຄຳພະຍາກອນທີ່ກວມເອົາທຸກຍຸກທຸກສະໄໝ ຈົນເຖິງວັນອະວະສານ, ແລະ ເປັນເງົາສະທ້ອນເຖິງການຂັດແຍ້ງອັນຍິ່ງໃຫຍ່ ທີ່ກ່ຽວຂ້ອງກັບມະນຸດທຸກເຊື້ອຊາດທີ່ຈະອາໄສຢູ່ເທິງແຜ່ນດິນໂລກ. *{GC 505.1}*

ພຣະເຈົ້າຊົງກ່າວວ່າ: “ເຮົາຈະໃຫ້ເຈົ້າກັບຜູ້ຍິງເປັນສັດຕູກັນ.” ການເປັນສັດຕູນີ້ບໍ່ໄດ້ເກີດຂຶ້ນເອງຕາມທຳມະຊາດ. ເມື່ອມະນຸດລະເມີດພຣະບັນຍັດຂອງພຣະເຈົ້າ, ທຳມະຊາດຂອງພວກເຂົາກໍເສື່ອມຊາມລົງ ເຊິ່ງເຮັດໃຫ້ພວກເຂົາປອງດອງກັບຊາຕານແທນທີ່ຈະຂັດແຍ້ງກັບມັນ. ຕາມທຳມະຊາດແລ້ວ, ບໍ່ມີຄວາມຂັດແຍ້ງກັນລະຫວ່າງຄົນບາບກັບຊາຕານ ຜູ້ເປັນຕົ້ນເຫດຂອງຄວາມບາບ. ທັງສອງຝ່າຍມີທຳມະຊາດອັນຊົ່ວຮ້າຍ ຍ້ອນການປະຖິ້ມຄວາມເຊື່ອ. ຜູ້ທີ່ປະຖິ້ມຄວາມເຊື່ອບໍ່ມີຄວາມສະຫງົບໃຈເລີຍ ເວັ້ນເສຍແຕ່ເຂົາຈະໄດ້ຮັບການສະໜັບສະໜູນ ແລະ ການເຂົ້າຂ້າງຈາກຜູ້ອື່ນ ໂດຍການຫຼອກລໍ້ພວກເຂົາໃຫ້ເຮັດຕາມແບບຢ່າງຂອງຕົນ. ດ້ວຍເຫດນີ້, ຄົນຊົ່ວ ແລະ ທູດສະຫວັນທີ່ຫຼົງຜິດຈຶ່ງຈຳໃຈຮ່ວມມືກັນ. ຖ້າພຣະເຈົ້າບໍ່ໄດ້ເຂົ້າມາຂັດຂວາງເປັນພິເສດ ຊາຕານກັບມະນຸດຄົງຈະຈັບມືກັນເພື່ອຕໍ່ສູ້ກັບສະຫວັນ, ແລ້ວແທນທີ່ຈະຮັກສາຄວາມເປັນສັດຕູຕໍ່ຊາຕານ ມະນຸດສະໂລກທັງໝົດຄົງຈະຮ່ວມກັບມັນໃນການຕໍ່ຕ້ານພຣະເຈົ້າ. *{GC 505.2}*

ຊາຕານໄດ້ຫຼອກລວງມະນຸດໃຫ້ເຮັດບາບ ຄືກັນກັບທີ່ມັນໄດ້ຊັກນຳເຫຼົ່າທູດສະຫວັນໃຫ້ກະບົດ ເພື່ອມັນຈະໄດ້ຮັບການຮ່ວມມືໃນການເຮັດສົງຄາມຕໍ່ສູ້ກັບສະຫວັນ. ໃນເລື່ອງຄວາມກຽດຊັງທີ່ມີຕໍ່ພຣະຄຣິສ ຊາຕານກັບເຫຼົ່າທູດສະຫວັນທີ່ຫຼົງຕິດຕາມມັນກໍບໍ່ມີຄວາມຂັດແຍ້ງກັນ. ເຖິງແມ່ນວ່າພວກມັນຈະບໍ່ລົງລອຍກັນໃນເລື່ອງອື່ນ ໆ ກໍຕາມ ແຕ່ກໍເປັນນ້ຳໜຶ່ງໃຈດຽວກັນໃນການຕໍ່ຕ້ານສິດອຳນາດຂອງພຣະເຈົ້າ ຜູ້ປົກຄອງແຫ່ງຈັກກະວານ. ຢ່າງໃດກໍຕາມ, ເມື່ອຊາຕານໄດ້ຍິນຄຳປະກາດວ່າ ລະຫວ່າງຕົວມັນເອງກັບຍິງນັ້ນ ແລະ ລະຫວ່າງເຊື້ອສາຍຂອງມັນກັບເຊື້ອສາຍຂອງນາງຈະເປັນສັດຕູກັນ, ມັນກໍຮູ້ວ່າ ມັນຈະຖືກຂັດຂວາງໃນການເຮັດໃຫ້ທຳມະຊາດຂອງມະນຸດເສື່ອມຊາມລົງ ທັງຮູ້ວ່າມະນຸດຈະສາມາດຕ້ານທານອຳນາດຂອງມັນໄດ້ໂດຍທາງໃດທາງໜຶ່ງ. *{GC 505.3}*

ຊາຕານມີຄວາມກຽດຊັງຕໍ່ມະນຸດ ຍ້ອນວ່າພວກເຂົາໄດ້ຮັບຄວາມຮັກ ແລະ ພຣະເມດຕາຈາກພຣະເຈົ້າ ຜ່ານທາງພຣະເຢຊູຄຣິສ. ມັນປາຖະໜາທີ່ຈະຂັດຂວາງແຜນການອັນສູງສົ່ງຂອງພຣະເຈົ້າໃນການໄຖ່ມະນຸດໃຫ້ລອດພົ້ນ. ມັນຕ້ອງການເຮັດໃຫ້ພຣະເຈົ້າເສື່ອມເສຍພຣະກຽດ ດ້ວຍການທຳລາຍ

ພຣະລັກສະນະຂອງພຣະອົງທີ່ມີໃນມະນຸດ ແລະ ດ້ວຍການເຮັດໃຫ້ອຸປະນິໄສຂອງພວກເຂົາເປິເປື້ອນ ມົນທິນ. ມັນຕ້ອງການເຮັດໃຫ້ມີຄວາມໂສກເສົ້າໃນສະຫວັນ ແລະ ໃຫ້ແຜ່ນດິນໂລກເຕັມໄປດ້ວຍ ຄວາມທຸກເວດທະນາກັບຄວາມເພພັງຫາຍະນະ. ແລ້ວມັນກໍຊີ້ໄປຍັງຄວາມຊົ່ວຮ້າຍທັງໝົດນີ້ວ່າ ເປັນ ໝາກຜົນແຫ່ງການຊົງສ້າງມະນຸດຂອງພຣະເຈົ້າ. {GC 506.1}

ພຣະຄຸນຂອງພຣະຄຣິສ

ສິ່ງທີ່ເຮັດໃຫ້ມະນຸດເປັນສັດຕູກັບຊາຕານໄດ້ ຄືພຣະຄຸນທີ່ພຣະຄຣິສໃສ່ໄວ້ໃນໃຈຂອງພວກເຂົາ. ຖ້າ ປາສະຈາກພຣະຄຸນທີ່ເຮັດໃຫ້ກັບໃຈໃໝ່ ແລະ ຣິດອຳນາດທີ່ຟື້ນຟູຈິດວິນຍານ, ມະນຸດກໍຈະສືບຕໍ່ໃນ ການເປັນຂ້າທາດຂອງຊາຕານ ໂດຍຈະຕ້ອງຍອມເຮັດຕາມຄວາມປະສົງຂອງມັນຢູ່ສະເໝີ. ແຕ່ເມື່ອ ພຣະຄຣິສຊົງໃສ່ຫຼັກການໃໝ່ໄວ້ໃນຈິດໃຈຂອງມະນຸດແລ້ວ ພວກເຂົາກໍເລີ່ມເປັນສັດຕູກັບຊາຕານ ເຊິ່ງ ເມື່ອກ່ອນເຄີຍເປັນມິດກັບມັນ. ພຣະຄຣິສປະທານກຳລັງໃຫ້ມະນຸດສາມາດຕໍ່ຕ້ານຊາຕານ ຜູ້ເປັນຈອມ ຜະເດັດການ ແລະ ເປັນຜູ້ຍາດເອົາອຳນາດໂດຍພະລະການ. ຜູ້ໃດທີ່ກຽດຊັງຄວາມບາບແທນທີ່ຈະ ຮັກມັນ, ພ້ອມດ້ວຍຜູ້ຄົນທີ່ຕໍ່ຕ້ານ ແລະ ມີໃຊຕໍ່ຄວາມຢາກທີ່ເຄີຍຄອບງຳຈິດໃຈນັ້ນ, ກໍສະແດງເຖິງ ຫຼັກການທີ່ມາຈາກເບື້ອງເທິງໂດຍແທ້ຈິງ. {GC 506.2}

ຄວາມຂັດແຍ້ງທີ່ມີຢູ່ລະຫວ່າງແນວຄິດຂອງພຣະຄຣິສກັບແນວຄິດຂອງຊາຕານ ໄດ້ສະແດງອອກ ຢ່າງຈະແຈ້ງທີ່ສຸດໃນທ່າທີທີ່ຊາວໂລກມີຕໍ່ພຣະເຢຊູ. ສາເຫດສ່ວນໃຫຍ່ທີ່ຊາວຢິວປະຕິເສດພຣະອົງ ບໍ່ ແມ່ນຍ້ອນພຣະອົງສະເດັດມາໂດຍບໍ່ມີຊັບສົມບັດ ຫຼື ຄວາມໂອ່ອ່າຟູຟ່າທາງຝ່າຍໂລກ. ພວກເຂົາເຫັນ ວ່າ ພຣະອົງຊົງມີຣິດອຳນາດທີ່ຊົງຄຸນຄ່າຫຼາຍກວ່າສິ່ງຂອງພາຍນອກ. ແຕ່ຄົນອະທຳກຽດຊັງພຣະຄຣິສ ຍ້ອນຄວາມສະອາດບໍຣິສຸດຂອງພຣະອົງ. ການດຳລົງຊີວິດຂອງພຣະອົງທີ່ປະຕິເສດຕົນເອງ ແລະ ອຸທິດ ຕົນໂດຍປາສະຈາກຄວາມບາບນັ້ນ ເປັນສິ່ງທີ່ໄດ້ປະນາມຜູ້ຄົນທີ່ຈອງຫອງຢູ່ຕະຫຼອດເວລາ ແລະ ເປັນ ສິ່ງທີ່ຕຳໜິຄົນທີ່ຕິດພັນໃນເນື້ອໜັງຢ່າງບໍ່ຢຸດຢ່ອນ. ເລື່ອງນີ້ແຫຼະທີ່ເຮັດໃຫ້ຊາວໂລກກຽດຊັງພຣະບຸດ ຂອງພຣະເຈົ້າ. ຊາຕານກັບເຫຼົ່າທູດຮ້າຍຂອງມັນໄດ້ເຂົ້າຮ່ວມກັບຄົນຊົ່ວ; ຝ່າຍທີ່ປະຕິເສດພຣະເຈົ້າໄດ້ ຮ່ວມພະລັງທັງໝົດ ເພື່ອຕໍ່ຕ້ານພຣະຄຣິສຜູ້ປົກປ້ອງຄວາມຈິງ. {GC 506.3}

ຜູ້ຕິດຕາມພຣະຄຣິສໄດ້ຖືກກຽດຊັງເໝືອນດັ່ງພຣະອາຈານຂອງພວກເຂົາ. ທຸກຄົນທີ່ເຫັນວ່າ ຄວາມ ບາບເປັນສິ່ງທີ່ໜ້າລັງກຽດ ແລະ ຕ້ານທານການທົດລອງດ້ວຍພະລັງທີ່ໄດ້ຮັບຈາກເບື້ອງເທິງ ກໍ ຈະຖືກຊາຕານກັບສະໝຸນຂອງມັນລຸກຂຶ້ນຕໍ່ຕ້ານດ້ວຍຄວາມໂກດຮ້າຍຢ່າງແນ່ນອນ. ຄວາມກຽດຊັງ ຕໍ່ຫຼັກການອັນບໍຣິສຸດແຫ່ງຄວາມຈິງ ພ້ອມທັງການປະນາມ ແລະ ການຂົ່ມເຫັງຄົນທັງຫຼາຍທີ່ ສະໜັບສະໜຸນຄວາມຈິງ ຈະຍັງຄົງມີຢູ່ຕາບໃດທີ່ຄວາມບາບ ແລະ ຄົນບາບຍັງມີຢູ່ໃນໂລກ. ສາວົກ ຂອງພຣະຄຣິສ ແລະ ຜູ້ຮັບໃຊ້ຂອງຊາຕານບໍ່ສາມາດຈະປອງດອງກັນໄດ້. ການຖືກຂົ່ມເຫັງຍ້ອນ ໄມ້ກາງແຂນກໍຍັງສືບຕໍ່ບໍ່ສິ້ນສຸດ. “ຕາມຄວາມຈິງແລ້ວ, ຜູ້ໃດກໍຕາມ ທີ່ປາຖະໜາຈະດຳເນີນຊີວິດຕາມ ທາງຂອງພຣະເຈົ້າ ໃນພຣະຄຣິສເຈົ້າເຢຊູນັ້ນ ກໍຈະຖືກຂົ່ມເຫັງ.” (2 ຕີໂມທຽວ 3:12 LCV). {GC 507.1}

ພວກຜູ້ຮັບໃຊ້ຂອງຊາຕານກຳລັງເຮັດວຽກຢູ່ຕະຫຼອດເວລາພາຍໃຕ້ການນຳພາຂອງມັນ ເພື່ອສ້າງຕັ້ງ ສິດອຳນາດ ແລະ ອານາຈັກຂອງມັນໃຫ້ເຂັ້ມແຂງ ໂດຍເລັ່ງທີ່ຈະຕໍ່ຕ້ານການປົກຄອງຂອງພຣະເຈົ້າ. ເພື່ອ ທີ່ຈະບັນລຸຈຸດປະສົງນີ້, ພວກມັນພະຍາຍາມຫຼອກລວງຜູ້ຕິດຕາມພຣະຄຣິສ ແລະ ລໍ້ລວງພວກເຂົາ ໃຫ້ປະຖິ້ມຄວາມສັດຊື່ທີ່ມີຕໍ່ພຣະອົງ. ໃນການບິດເບືອນ ແລະ ພິກແພງຂໍ້ພຣະຄຳພີ ເພື່ອໃຫ້ ສຳເລັດຕາມຈຸດປະສົງຂອງຕົນ, ຄົນເຫຼົ່ານີ້ບໍ່ຕ່າງຫຍັງກັບຊາຕານຜູ້ເປັນນາຍຂອງພວກເຂົາ. ຊາຕານ ພະຍາຍາມຊັກນຳໃຫ້ຄົນດູໝິ່ນພຣະເຈົ້າຢ່າງໃດ ຜູ້ຮັບໃຊ້ຂອງມັນກໍພະຍາຍາມດູໝິ່ນໃສ່ຮ້າຍປະຊາຊົນ

ຂອງພຣະອົງຢ່າງນັ້ນ. ແນວຄິດທີ່ນຳໄປສູ່ການປະຫານອົງພຣະຄຣິສ ກໍຍັງຄອບງຳຄົນຊົ່ວໃຫ້ທຳລາຍພວກສາວົກຂອງພຣະອົງ. ທັງໝົດນີ້, ໄດ້ຖືກທຳນວາຍໄວ້ລ່ວງໜ້າໃນຄຳພະຍາກອນທຳອິດທີ່ກ່າວວ່າ: “ເຮົາຈະໃຫ້ເຈົ້າກັບຜູ້ຍິງເປັນສັດຕູກັນ ແລະ ເຊື້ອສາຍຂອງເຈົ້າກັບເຊື້ອສາຍຂອງຜູ້ຍິງເປັນສັດຕູກັນ.” (ປະຖົມມະການ 3:15 ສະບັບລາວບູຮານ). ສິ່ງເຫຼົ່ານີ້ຈະດຳເນີນຕໍ່ໄປຈົນເຖິງວາລະສຸດທ້າຍ. *{GC 507.2}*

ຊາຕານຮວບຮວມພັກພວກ ແລະ ພະລັງທັງໝົດຂອງມັນເພື່ອການຕໍ່ສູ້, ແຕ່ເປັນຫຍັງມັນຈຶ່ງບໍ່ພົບກັບການຕໍ່ຕ້ານຫຼາຍກວ່ານີ້? ເປັນຫຍັງທະຫານຂອງພຣະຄຣິສຈຶ່ງງ່ວງເຫງົາຫາວນອນ ແລະ ເມີນເສີຍຕໍ່ສິ່ງເຫຼົ່ານີ້? ສາເຫດກໍຍ້ອນວ່າ ພວກເຂົາບໍ່ໄດ້ສະໜິດຕິດພັນກັບພຣະຄຣິສຢ່າງແທ້ຈິງ ແລະ ຍ້ອນວ່າພວກເຂົາຂາດພຣະວິນຍານຂອງພຣະອົງ. ພຣະເຢຊູຊົງເຫັນວ່າ ຄວາມບາບເປັນສິ່ງທີ່ໜ້າກ່ຽດຊັງ ແລະ ໜ້າລັງກຽດ ແຕ່ບັນດາລູກສິດຂອງພຣະອົງບໍ່ໄດ້ເຫັນຢ່າງນັ້ນ. ພວກເຂົາບໍ່ໄດ້ຕໍ່ສູ້ກັບຄວາມບາບຢ່າງເດັດດ່ຽວໝັ້ນຄົງ ເໝືອນດັ່ງທີ່ພຣະຄຣິສຊົງຕໍ່ສູ້ກັບມັນ. ທະຫານຂອງພຣະຄຣິສໃນຍຸກນີ້ ບໍ່ເຂົ້າໃຈເຖິງຄວາມຊົ່ວຮ້າຍ ແລະ ພິດອັນຕະລາຍຂອງຄວາມບາບ. ພວກເຂົາຕາບອດເບິ່ງບໍ່ເຫັນອຸປະນິໄສ ແລະ ອຳນາດຂອງເຈົ້າແຫ່ງຄວາມມືດ. ຄົນສ່ວນຫຼາຍບໍ່ເຫັນຊາຕານເປັນສັດຕູ ແລະ ບໍ່ໄດ້ກຽດຊັງວຽກງານຂອງມັນ ຍ້ອນວ່າພວກເຂົາບໍ່ເຂົ້າໃຈກ່ຽວກັບອຳນາດ ແລະ ເຈດຕະນາຮ້າຍຂອງມັນ. ນອກຈາກນີ້, ພວກເຂົາບໍ່ຄ່ອຍໄດ້ຮັບຮູ້ເຖິງສົງຄາມທີ່ຊາຕານເຮັດຕໍ່ພຣະເຢຊູ ແລະ ຄຣິສຕະຈັກຂອງພຣະອົງອັນແຜ່ອອກໄປຢ່າງກວ້າງຂວາງ. ມີຄົນຈຳນວນຫຼວງຫຼາຍຖືກຫຼອກລວງໃນເລື່ອງນີ້; ພວກເຂົາບໍ່ຮູ້ວ່າ ສັດຕູຂອງມະນຸດແມ່ນແມ່ທັບຜູ້ເກ່ງກ້າສາມາດທີ່ຄວບຄຸມຄວາມຄິດຂອງເຫຼົ່າທູດສະຫວັນຜູ້ຫຼົງຜິດ; ແລະບໍ່ຮູ້ວ່າ ຊາຕານກຳລັງຕໍ່ສູ້ກັບພຣະຄຣິສຕາມແຜນການທີ່ວາງໄວ້ຢ່າງລະອຽດ ແລະ ດ້ວຍການເຄື່ອນໄຫວຢ່າງຊຳນິຊຳນານ ເພື່ອຂັດຂວາງບໍ່ໃຫ້ມະນຸດໄດ້ຮັບຄວາມລອດພົ້ນ. ໃນໝູ່ຄຣິສຕຽນ ແລະ ແມ່ນແຕ່ທ່ານກາງເຫຼົ່າສາສະໜາຈານເກືອບຈະບໍ່ມີການເວົ້າເຖິງຊາຕານເລີຍ ນອກຈາກບາງຄັ້ງທີ່ກ່າວເຖິງແບບຜ່ານ ໆ ໃນຄຳເທດສະໜາເທົ່ານັ້ນ. ພວກເຂົາເບິ່ງຂ້າມຫຼັກຖານທີ່ສະແດງໃຫ້ເຫັນເຖິງການເຄື່ອນໄຫວ ແລະ ຜົນສຳເລັດອັນຕໍ່ເນື່ອງຂອງມັນ. ຫຼາຍຄົນທີ່ອ້າງຕົນເປັນຄຣິສຕຽນ ໄດ້ລະເລີຍຄຳເຕືອນທີ່ມີຢ່າງຫຼວງຫຼາຍກ່ຽວກັບກົນອຸບາຍຂອງຊາຕານ ແລະ ເຮັດຄືກັບວ່າຊາຕານບໍ່ມີຈິງ. *{GC 507.3}*

ສັດຕູຜູ້ບໍ່ເຄີຍຫຼັບໄຫຼ

ໃນຂະນະທີ່ມະນຸດບໍ່ຮູ້ເຖິງກົນອຸບາຍຂອງສັດຕູຜູ້ນີ້, ມັນກໍຄອຍຕິດຕາມພວກເຂົາຢູ່ຕະຫຼອດເວລາ. ມັນໄດ້ແຊກແຊງເຂົ້າໄປໃນທຸກພາກສ່ວນຂອງຄອບຄົວ, ຕາມຖະໜົນຫົນທາງທຸກສາຍໃນເມືອງຂອງພວກເຮົາ, ໃນຄຣິສຕະຈັກຕ່າງ ໆ, ໃນສະພາແຫ່ງຊາດ ແລະ ໃນສານຍຸຕິທຳ. ມັນຫຼອກລວງ, ສ້າງຄວາມສັບສົນ, ຊັກຈູງໃຫ້ຫຼົງ, ທຳລາຍຈິດວິນຍານ ແລະ ຮ່າງກາຍຂອງຜູ້ຊາຍ, ຜູ້ຍິງ ແລະ ເດັກນ້ອຍໃນທຸກຫົນແຫ່ງ. ມັນທຳລາຍຄອບຄົວ, ຍຸຍົງໃຫ້ເກີດຄວາມກ່ຽດຊັງ, ປຸກລະດົມໃຫ້ມີການຊິງດີຊິງເດັ່ນກັນ, ຍຸແຍ່ໃຫ້ເກີດການຜິດຖຽງກັນ, ການກໍ່ກະບົດ ແລະ ການຂ້າຟັນລັນແທງກັນ. ແຕ່ວົງການຄຣິສຕຽນທົ່ວໂລກກັບຖືວ່າ ເປັນສິ່ງທີ່ພຣະເຈົ້າຊົງກຳນົດໄວ້ ແລະ ບໍ່ອາດຫຼີກລ່ຽງໄດ້. *{GC 508.1}*

ຊາຕານກຳລັງຂຸອກເຊາະເຈາະຈີ້ມຫາທາງເອົາຊະນະຄົນຂອງພຣະເຈົ້າຢູ່ສະເໝີ ໂດຍການທຳລາຍກຳແພງທີ່ແຍກພວກເຂົາອອກຈາກຊາວໂລກ. ເມື່ອຊາວອິດສະຣາເອນໃນສະໄໝບູຮານ ໄດ້ຝ່າຝືນການຊົງຫ້າມຂອງພຣະເຈົ້າ ແລະ ໄປພົວພັນກັບຊົນຊາດທີ່ບໍ່ນັບຖືພຣະອົງ, ພວກເຂົາກໍຖືກຊັກຈູງໃຫ້ເຮັດ

ບາບ. ຄົນຂອງພຣະເຈົ້າໃນປັດຈຸບັນ ກຳລັງຖືກຊັກນຳໃຫ້ຫຼົງທາງໃນລັກສະນະແບບດຽວກັນ. “ພຣະ ຂອງຍຸກນີ້ເຮັດໃຫ້ຈິດໃຈຂອງບັນດາຄົນທີ່ບໍ່ເຊື່ອບອດໄປ, ເພື່ອວ່າພວກເຂົາຈະບໍ່ສາມາດເຫັນແສງ ສະຫວ່າງຂອງຂ່າວປະເສີດ ທີ່ສະແດງສະຫງ່າຣາສີຂອງພຣະຄຣິສເຈົ້າ ຜູ້ເປັນເໝືອນພຣະເຈົ້າທຸກ ຢ່າງ.” (2 ໂກຣິນໂທ 4:4 LCV). ທຸກຄົນທີ່ບໍ່ໄດ້ຕັດສິນໃຈຕິດຕາມພຣະຄຣິສ ກໍເປັນຜູ້ຮັບໃຊ້ ຂອງຊາຕານ. ໃນຈິດໃຈທີ່ຍັງບໍ່ທັນໄດ້ບັງເກີດໃໝ່ນັ້ນ ມີໃຈຮັກຄວາມບາບ ແລະ ມີແນວໂນ້ມທີ່ຈະ ທະນຸຖະໜອມຫຼໍ່ລ້ຽງຄວາມບາບ ແລະ ແກ້ຕົວໃຫ້ກັບມັນ. ແຕ່ຈິດໃຈທີ່ບັງເກີດໃໝ່ແລ້ວນັ້ນ ຈະມີ ຄວາມກຽດຊັງຕໍ່ຄວາມບາບ ແລະ ມີຄວາມຕັ້ງໃຈຢ່າງຈົດຈໍ່ແນ່ວແນ່ ທີ່ຈະຕ້ານທານຄວາມບາບ. ເມື່ອ ຄຣິສຕຽນເລືອກທີ່ຈະຄົບຄ້າສະມາຄົມກັບຄົນອະທຳ ແລະ ຄົນທີ່ບໍ່ເຊື່ອ, ພວກເຂົາກໍເປີດໂອກາດໃຫ້ ຕົນເອງຖືກທົດລອງ. ຊາຕານເຊື່ອງຊ່ອນຕົວບໍ່ໃຫ້ພວກເຂົາເຫັນ ແລະ ຫຼອກລວງໂດຍການຄ່ອຍ ໆ ຂຶງ ຜ້າປົກຕາຂອງພວກເຂົາຢ່າງຊ້າ ໆ. ພວກເຂົາບໍ່ເຫັນວ່າການຄົບຄ້າກັບຄົນເຊັ່ນນີ້ ນຳຄວາມເສຍຫາຍມາ ສູ່ຕົນຢ່າງແນ່ນອນ. ໃນຂະນະທີ່ພວກເຂົາປັບຕົວໃຫ້ເຂົ້າກັບຊາວໂລກທັງໃນດ້ານນິໄສ, ວາຈາ ແລະ ການ ກະທຳ, ຈິດໃຈຂອງພວກເຂົາກໍຍິ່ງມືດບອດຫຼາຍຂຶ້ນເລື້ອຍ ໆ. *{GC 508.2}*

ການເຮັດຕາມທຳນຽມຂອງຊາວໂລກ ຈະເຮັດໃຫ້ຄຣິສຕະຈັກກາຍເປັນແບບຊາວໂລກ ແຕ່ຈະບໍ່ ມີວັນເຮັດໃຫ້ຊາວໂລກຫັນມາຫາພຣະຄຣິສ. ເມື່ອຄົນເຮົາລຶ້ງເຄີຍກັບຄວາມບາບ ຈະເຮັດໃຫ້ຄວາມ ບາບນັ້ນເບິ່ງຄືບໍ່ໜ້າກຽດຊັງເທົ່າທີ່ຄວນ. ຜູ້ທີ່ເລືອກຄົບຄ້າສະມາຄົມກັບຜູ້ຮັບໃຊ້ຂອງຊາຕານ ບໍ່ຊ້າ ກໍຈະເລີກຢ້ານກົວບາຍຂອງພວກເຂົາ. ເມື່ອພວກເຮົາຕ້ອງປະເຊີນກັບການທົດລອງໃນຂະນະທີ່ກຳລັງ ປະຕິບັດໜ້າທີ່, ເໝືອນດັ່ງດານີເອນຖືກທົດລອງໃນພຣະຣາຊວັງຂອງກະສັດ, ພວກເຮົາກໍແນ່ໃຈໄດ້ເລີຍ ວ່າ ພຣະເຈົ້າຈະຊົງປົກປ້ອງພວກເຮົາ; ແຕ່ຖ້າພວກເຮົານຳພາຕົນເອງເຂົ້າສູ່ການທົດລອງ ພວກເຮົາກໍ ຈະສະດຸດລົ້ມລົງຢ່າງແນ່ນອນ, ບໍ່ຊ້າກໍໄວ. *{GC 509.1}*

ວິທີທີ່ຊາຕານສາມາດລໍ້ລວງຄົນໄດ້ສຳເລັດດີທີ່ສຸດຢ່າງໜຶ່ງ ຄືການໃຊ້ຄົນທີ່ບໍ່ມີໃຜຄາດຄິດວ່າ ຜູ້ນັ້ນຢູ່ພາຍໃຕ້ການຄວບຄຸມຂອງມັນ. ຄົນທີ່ມີພອນສະຫວັນ ແລະ ການສຶກສາສູງ ມັກໄດ້ຮັບ ການນັບໜ້າຖືຕາເໝືອນກັບວ່າ ຄຸນສົມບັດເຫຼົ່ານີ້ສາມາດຊົດເຊີຍການທີ່ພວກເຂົາຂາດຄວາມຢຳເກງ ພຣະເຈົ້າ. ບາງຄົນເຂົ້າໃຈຜິດວ່າ ຄົນທີ່ມີຄວາມສາມາດ ຫຼື ການຮຽນສູງ ກໍສົມຄວນໄດ້ຮັບຄວາມ ໂປດປານຈາກພຣະອົງ ເພາະຄວາມເກັ່ງຂອງພວກເຂົາ. ແທ້ຈິງແລ້ວ, ພອນສະຫວັນ ແລະ ການ ສຶກສາເປັນຂອງປະທານຈາກພຣະເຈົ້າ, ແຕ່ເມື່ອນຳສິ່ງເຫຼົ່ານີ້ມາທົດແທນຄວາມເຊື່ອ, ແທນທີ່ຈະນຳ ຈິດວິນຍານເຂົ້າໃກ້ພຣະເຈົ້າ ຊ້ຳພັດພາໃຫ້ຫ່າງຈາກພຣະອົງ ແລະ ກາຍເປັນກັບດັກທີ່ເປັນເຫດໃຫ້ ຕ້ອງຖືກສາບແຊ່ງ. ຫຼາຍຄົນເຊື່ອວ່າ, ທຸກສິ່ງທີ່ສະແດງອອກເຖິງຄວາມມີມາລະຍາດ ຫຼື ຄວາມສຸພາບ ຮຽບຮ້ອຍ ຕ້ອງກ່ຽວຂ້ອງກັບພຣະຄຣິສບໍ່ຫຼາຍກໍໜ້ອຍ. ແຕ່ນີ້ເປັນຄວາມເຂົ້າໃຈຜິດອັນໃຫຍ່ຫຼວງ. ຄຸນ ສົມບັດເຫຼົ່ານີ້ຄວນປະດັບອຸປະນິໄສຂອງຄຣິສຕຽນທຸກຄົນ ເພາະຈະມີພະລັງໃນການສົ່ງເສີມສາສະໜາ ທີ່ແທ້ຈິງ. ແຕ່ຖ້າບໍ່ໄດ້ອຸທິດຖວາຍໃຫ້ແກ່ພຣະເຈົ້າ ຄຸນສົມບັດເຫຼົ່ານີ້ຈະກາຍເປັນພະລັງໂນ້ມນ້າວໃຫ້ ເກີດຄວາມຊົ່ວຮ້າຍ. ຫຼາຍຄົນທີ່ມີສະຕິປັນຍາສູງ, ມີມາລະຍາດດີ ແລະ ບໍ່ຍອມລົດຕົວລົງໄປເຮັດສິ່ງທີ່ ຄົນທົ່ວໄປຖືວ່າຜິດສິນທຳ ແຕ່ແທ້ທີ່ຈິງແລ້ວພວກເຂົາເປັນພຽງເຄື່ອງມືທີ່ຖືກຂັດມັນໃຫ້ເຫຼື້ອມຢູ່ໃນມືຂອງ ຊາຕານເທົ່ານັ້ນ. ຍ້ອນຄົນເຊັ່ນນີ້ເຊື່ອງຊ່ອນລັກສະນະທີ່ແທ້ຈິງຂອງຕົນ, ຊາຕານຈຶ່ງສາມາດໃຊ້ພວກເຂົາ ເປັນເຄື່ອງມືທີ່ອັນຕະລາຍຕໍ່ພາລະກິດຂອງພຣະຄຣິສ ຫຼາຍກວ່າຄົນທີ່ຂາດຄວາມຮູ້ ແລະ ດ້ອຍການ ສຶກສາ. *{GC 509.2}*

ຍ້ອນການອະທິຖານຢ່າງຮ້ອນຮົນ ແລະ ການໄວ້ວາງໃຈໃນພຣະເຈົ້າ ກະສັດໂຊໂລໂມນໄດ້ຮັບ

ສະຕິປັນຍາທີ່ເຮັດໃຫ້ຊາວໂລກປະຫຼາດໃຈ ແລະ ຊົ່ນເຊີຍ. ແຕ່ເມື່ອເພິ່ນຫັນໄປຈາກພຣະອົງຜູ້ໃຫ້ ປັນຍາ ແລະ ເຫື່ອແຮງກຳລັງ, ແລ້ວດຳເນີນຊີວິດໂດຍເພິ່ງພາຕົນເອງ, ເພິ່ນກໍຕົກເປັນເຫຍື່ອຂອງການ ທົດລອງ. ເມື່ອນັ້ນ, ຄວາມສາມາດອັນໜ້າອັດສະຈັນທີ່ພຣະເຈົ້າປະທານໃຫ້ແກ່ມະສັດຜູ້ສະຫຼາດທີ່ສຸດ ນີ້ ພັດເຮັດໃຫ້ເພິ່ນມີປະສິດທິພາບຫຼາຍຂຶ້ນ ໃນການຮັບໃຊ້ຊາຕານຜູ້ເປັນສັດຕູຂອງມະນຸດ. {GC 509.3}

ເຖິງແມ່ນວ່າຊາຕານພະຍາຍາມຢູ່ຕະຫຼອດເວລາ ເພື່ອເຮັດໃຫ້ຈິດໃຈຂອງຄຣິສຕຽນມືດບອດກໍຕາມ, ແຕ່ຂໍຢ່າໃຫ້ພວກເຂົາໄດ້ລືມໄປວ່າ “ພວກເຮົາບໍ່ໄດ້ຕໍ່ສູ້ກັບມະນຸດ ແຕ່ຕໍ່ສູ້ກັບພວກຜູ້ຄອບຄອງ ພວກ ຜູ້ມີອຳນາດ ຕໍ່ສູ້ກັບພວກເທບພະເຈົ້າທີ່ຄອງໂລກມືດນີ້ ແລະ ຕໍ່ສູ້ກັບພວກວິນຍານຊົ່ວຮ້າຍໃນໂລກ ຝ່າຍວິນຍານ.” (ເອເຟໂຊ 6:12 THA-ERV). ຄຳເຕືອນຂອງພຣະວິນຍານບໍຣິສຸດ ຍັງຄົ້ງກ້ອງ ກັ້ງວານຕະຫຼອດຫຼາຍຮ້ອຍປີ ມາຈົນເຖິງສະໄໝຂອງພວກເຮົາວ່າ: “ຈົ່ງຄອຍລະວັງຕົວ ແລະ ເຝົ້າ ຢູ່. ດ້ວຍວ່າ, ສັດຕູຂອງພວກເຈົ້າຄືມານ ທຽວວົນວຽນໄປມາເໝືອນໂຕສິງ ທີ່ແຜດສຽງຊອກຫາຄົນທີ່ ມັນຈະກັດກິນໄດ້.” (1 ເປໂຕ 5:8). “ຈົ່ງສວມຍຸດທະພັນຄົບຊຸດຂອງພຣະເຈົ້າ ເພື່ອວ່າພວກເຈົ້າຈະ ສາມາດຢືນຕ້ານຕໍ່ສູ້ກັບກົນອຸບາຍຂອງມານຮ້າຍໄດ້.” (ເອເຟໂຊ 6:11 LCV). {GC 510.1}

ນັບຕັ້ງແຕ່ສະໄໝຂອງອາດາມມາເຖິງສະໄໝປັດຈຸບັນ ສັດຕູຮ້າຍຂອງພວກເຮົາໄດ້ໃຊ້ອຳນາດຂອງມັນ ໃນການກົດຂີ່ ແລະ ທຳລາຍ. ບັດນີ້, ມັນກຳລັງຈັດຕຽມການໂຈມຕີຄຣິສຕະຈັກເປັນຄັ້ງສຸດທ້າຍ. ທຸກ ຄົນທີ່ພະຍາຍາມຕິດຕາມພຣະເຢຊູ ຈະຕ້ອງປະເຊີນກັບສັດຕູຜູ້ບໍ່ຍອມລົດລະຜູ້ນີ້. ຍິ່ງຄຣິສຕຽນເຮັດ ຕາມແບບຢ່າງຂອງພຣະເຢຊູຫຼາຍເທົ່າໃດ, ກໍຍິ່ງຈະກາຍເປັນເປົ້າໝາຍການໂຈມຕີຂອງຊາຕານຫຼາຍຂຶ້ນ ເທົ່ານັ້ນ. ທຸກຄົນທີ່ເຮັດວຽກງານຂອງພຣະເຈົ້າຢ່າງຫ້າວຫັນ ໂດຍພະຍາຍາມເປີດໂປງການຫຼອກລວງ ຂອງຊາຕານ ແລະ ປະກາດເລື່ອງຂອງພຣະຄຣິສແກ່ປະຊາຊົນ, ຈະມີປະສົບການແບບດຽວກັນ ກັບອາຈານໂປໂລ ເມື່ອເພິ່ນກ່າວວ່າ: “ຂ້າພະເຈົ້າໄດ້ຮັບໃຊ້ອົງພຣະຜູ້ເປັນເຈົ້າ ດ້ວຍຄວາມຖ່ອມຕົວ ທຸກຢ່າງ ດ້ວຍນ້ຳຕາໄຫຼ ແລະ ໂດຍຜ່ານຜ່າຄວາມຍາກລຳບາກນາໆປະການ.” (ກິດຈະການ 20:19). {GC 510.2}

ຊາຕານໄດ້ໂຈມຕີພຣະຄຣິສດ້ວຍການທົດລອງທີ່ຮ້າຍກາດ ແລະ ມີເລ່ລ່ຽມຫຼາຍທີ່ສຸດ, ແຕ່ພຣະອົງ ຊະນະການຕໍ່ສູ້ໃນທຸກຄັ້ງ. ພຣະເຢຊູຊົງຕໍ່ສູ້ກັບການທົດລອງເພື່ອພວກເຮົາ ແລະ ໄຊຊະນະຂອງ ພຣະອົງເຮັດໃຫ້ພວກເຮົາສາມາດເອົາຊະນະໄດ້. ພຣະຄຣິສຈະປະທານກຳລັງແກ່ທຸກຄົນທີ່ສະແຫວງຫາ ກຳລັງຈາກພຣະອົງ. ບໍ່ມີຜູ້ໃດຈະພ່າຍແພ້ຕໍ່ຊາຕານນອກຈາກຈະຍິນຍອມໃຫ້ມັນຊະນະ. ຊາຕານບໍ່ມີ ອຳນາດຄວບຄຸມຄວາມຕັ້ງໃຈ ຫຼື ບັງຄັບຄົນໃຫ້ເຮັດບາບ. ມັນອາດສ້າງຄວາມທຸກໃຈ ແຕ່ບໍ່ສາມາດ ເຮັດໃຫ້ເສື່ອມເສຍໄດ້. ມັນສາມາດເຮັດໃຫ້ເຈັບປວດ ແຕ່ບໍ່ສາມາດເຮັດໃຫ້ເປິເປື້ອນມົນທິນໄດ້. ການ ທີ່ພຣະຄຣິສຊົງຊະນະການທົດລອງນັ້ນ ຄວນເປັນແຮງກຳລັງໃຈໃຫ້ເຫຼົ່າສາວົກຂອງພຣະອົງ ມີຄວາມ ກ້າຫານທີ່ຈະຕໍ່ສູ້ກັບຊາຕານ ແລະ ຕໍ່ສູ້ກັບຄວາມບາບຢ່າງເຕັມກຳລັງ. {GC 510.3}



ເມື່ອພຣະເຢຊູຊົງບັນຊາແລ້ວ ຜີຮ້າຍກໍອອກຈາກສອງຄົນນັ້ນ. ຜີຮ້າຍທັງກອງພົນນັ້ນ
ໄດ້ຮັບອະນຸຍາດໃຫ້ເຂົ້າສິງຝູງໝູ ແລ້ວກໍຕ້ອນພວກມັນໂດດລົງຕາຍໃນທະເລ.

ເບິ່ງໜ້າ 416.

Image generated with AI (Google Gemini).

31

ການເຄື່ອນໄຫວຂອງວິນຍານຊົ່ວ

ເຫຼົ່າທູດສະຫວັນ

ການເຊື່ອມໂຍງລະຫວ່າງໂລກທີ່ເບິ່ງເຫັນ ກັບໂລກທີ່ເບິ່ງບໍ່ເຫັນ, ການປະຕິບັດໜ້າທີ່ຂອງທູດສະຫວັນຂອງພຣະເຈົ້າ ແລະ ການເຄື່ອນໄຫວຂອງພວກທູດສະຫວັນທີ່ກະບົດພ້ອມກັບຊາຕານນັ້ນ ໄດ້ຖືກເປີດເຜີຍຢ່າງຈະແຈ້ງໃນພຣະຄຳພີ ແລະ ກ່ຽວພັນກັບປະຫວັດສາດຂອງມະນຸດຢ່າງແຍກອອກຈາກກັນບໍ່ໄດ້. ປັດຈຸບັນນີ້, ມີຄົນຈຳນວນຫຼາຍຂຶ້ນທີ່ບໍ່ເຊື່ອວ່າມີທູດຂອງຊາຕານ; ຫຼາຍຄົນຄິດວ່າ ທູດສະຫວັນບໍຣິສຸດຜູ້ທີ່ “ບ່ວລະບັດບັນດາຜູ້ທີ່ຈະໄດ້ຮັບຄວາມພົ້ນ”[1] ນັ້ນ ແມ່ນວິນຍານຂອງຄົນຕາຍ. ແຕ່ພຣະຄຳພີບໍ່ພຽງແຕ່ສອນວ່າ ມີທູດສະຫວັນທັງຝ່າຍດີ ແລະ ຝ່າຍທີ່ກະບົດພ້ອມກັບຊາຕານເທົ່ານັ້ນ, ແຕ່ຍັງສະແດງຫຼັກຖານທີ່ບໍ່ອາດປະຕິເສດໄດ້ວ່າ ທູດສະຫວັນບໍ່ແມ່ນວິນຍານຂອງຄົນຕາຍ. *{GC 511.1}*

ກ່ອນທີ່ພຣະເຈົ້າຈະຊົງສ້າງມະນຸດຂຶ້ນມາ ທູດສະຫວັນກໍມີຢູ່ແລ້ວ. ເມື່ອພຣະອົງຊົງວາງຮາກຖານແຜ່ນດິນໂລກ “ໝູ່ດວງດາວຮ້ອງເພງນຳກັນ, ພວກເທວະດາຂອງພຣະອົງ ກໍເປ່ງສຽງໂຮ່ຮ້ອງຍິນດີທັງນັ້ນ.” (ໂຢບ 38:7). ຫຼັງຈາກມະນຸດຫຼົງໄປໃນຄວາມບາບ ພຣະເຈົ້າໄດ້ສົ່ງທູດສະຫວັນໄປເຝົ້າຍາມຕົ້ນໄມ້ແຫ່ງຊີວິດ, ເຊິ່ງເຫດການນີ້ໄດ້ເກີດຂຶ້ນກ່ອນທີ່ຈະມີມະນຸດລົ້ມຕາຍຕາຍຈາກ. ທູດສະຫວັນມີທຳມະຊາດທີ່ເໜືອກວ່າມະນຸດ, ດັ່ງທີ່ຜູ້ຂຽນເພງສັນລະເສີນໄດ້ກ່າວໄວ້ວ່າ ມະນຸດຖືກສ້າງຂຶ້ນໃຫ້ “ຕ່ຳກວ່າພວກທູດສະຫວັນແຕ່ໜ້ອຍດຽວ.” (ເພງສັນລະເສີນ 8:5 TKJV). *{GC 511.2}*

ພຣະຄຳພີໄດ້ບອກເຖິງຈຳນວນ, ອຳນາດ ແລະ ສະຫງ່າຣາສີຂອງເຫຼົ່າທູດສະຫວັນ, ການເຊື່ອມໂຍງຂອງທູດສະຫວັນກັບການປົກຄອງຂອງພຣະເຈົ້າ ແລະ ຄວາມສຳພັນຕໍ່ພາລະກິດການໄຖ່ມະນຸດໃຫ້ລອດ. “ອົງພຣະຜູ້ເປັນເຈົ້າຕັ້ງພຣະບັນລັງໄວ້ຢູ່ໃນຟ້າສະຫວັນ ຊົງເປັນກະສັດປົກຄອງເໜືອສັບພະທຸກສິ່ງ.” ຜູ້ເຜີຍພຣະທຳກ່າວວ່າ “ຂ້າພະເຈົ້າ . . . ຍິນສຽງຂອງເທວະດາຈຳນວນຫຼວງຫຼາຍ . . . ອ້ອມຮອບບັນລັງ.” ທູດສະຫວັນເຫຼົ່ານັ້ນເຂົ້າເຝົ້າພຣະມະຫາຣາຊາເໜືອກະສັດທັງປວງ, ກໍຄື “ພວກເທວະດາຜູ້ແຂງແຮງ ແລະ ມີຣິດອຳນາດຍິ່ງໃຫຍ່” ຄື “ຜູ້ທີ່ຍອມຟັງສິ່ງທີ່ພຣະອົງຊົງກ່າວ.” (ເພງສັນລະເສີນ 103:19–21 LO2012; ພຣະນິມິດ 5:11 LCV). ຜູ້ເຜີຍພຣະທຳດານີເອນໄດ້ເຫັນທູດສະຫວັນນັບເປັນລ້ານໆອົງ. ອັກຄະສາວົກໂປໂລກ່າວວ່າ “ທູດສະຫວັນ . . . ມີຈຳນວນຫຼວງຫຼາຍເກີນທີ່ຈະນັບໄດ້.” (ເບິ່ງ ດານີເອນ 7:10; ເຮັບເຣີ 12:22 ດັດແປງຈາກສະບັບ NTV). ພຣະຄຳພີຂຽນວ່າ ພວກເພິ່ນນຳຂ່າວສານອອກໄປ “ເໝືອນດັ່ງຟ້າຜ່າ” (ເອເຊກຽນ 1:14) ຍ້ອນວ່າທູດສະຫວັນເຫຼົ່ານີ້ມີສະຫງ່າຣາສີອັນເຈີດຈ້າ ແລະ ບິນໄປຢ່າງໄວວາ. ທູດສະຫວັນທີ່ປາກົດຢູ່ທີ່ອຸບມຸງຝັງພຣະສົບຂອງ

[1] ເຮັບເຣີ 1:14 LCV.

ພຣະຜູ້ຊ່ວຍໃຫ້ລອດ “ມີລັກສະນະເໝືອນແສງຟ້າແມບ, ເຄື່ອງນຸ່ງກໍຂາວເໝືອນຫິມະ,” ເຮັດໃຫ້ພວກທະຫານຍາມໂຕສັ່ນດ້ວຍຄວາມຢ້ານກົວ ແລະ “ກາຍເປັນເໝືອນຄົນຕາຍ.” (ມັດທາຍ 28:3, 4). ເມື່ອເຊັນນາເກຣິບ ກະສັດອັດຊີເຣຍຜູ້ຈອງຫອງ ໄດ້ໝິ່ນປະໝາດ ແລະ ກ່າວຄຳລົບຫຼູ່ພຣະເຈົ້າ, ພ້ອມທັງຂົ່ມຂູ່ວ່າຈະທຳລາຍຊົນຊາດອິດສະຣາເອນ, “ໃນຄືນນັ້ນ ເທວະດາຂອງອົງພຣະຜູ້ເປັນເຈົ້າ ໄດ້ລົງມາຂ້າທະຫານ 185,000 ຄົນ.” “ທະຫານ ແລະ ນາຍທະຫານຂອງກອງທັບອັດຊີເຣຍ” ຖືກຂ້າຕາຍ. “ສະນັ້ນ, ກະສັດແຫ່ງອັດຊີເຣຍຈຶ່ງໄດ້ກັບຄືນເມືອປະເທດຢ່າງອັບອາຍຂາຍໜ້າ.” (2 ກະສັດ 19:35 LO2012; 2 ຂ່າວຄາວ 32:21). {GC 511.3}

ພຣະເຈົ້າຊົງສົ່ງເຫຼົ່າທູດສະຫວັນອອກໄປ ເພື່ອປະຕິບັດພາລະກິດແຫ່ງຄວາມເມດຕາໃຫ້ແກ່ໄພ່ພົນຂອງພຣະອົງ, ຕົວຢ່າງເຊັ່ນ: ທູດສະຫວັນໄດ້ມາຫາອັບຣາຮາມພ້ອມດ້ວຍຄຳສັນຍາວ່າ ເພິ່ນຈະໄດ້ຮັບພຣະພອນ; ໄດ້ມາທີ່ປະຕູເມືອງໂຊໂດມ ເພື່ອຊ່ວຍເຫຼືອໂລດຜູ້ຊອບທຳຈາກການທີ່ເມືອງນັ້ນຈະຖືກທຳລາຍດ້ວຍໄຟ; ໄດ້ມາຫາເອລີຢາໃນທະເລຊາຍ ໃນຂະນະທີ່ເພິ່ນໃກ້ຈະຕາຍຍ້ອນຄວາມອິດເມື່ອຍ ແລະ ຄວາມອຶດຢາກ. ເຫຼົ່າທູດສະຫວັນໄດ້ມາຫາເອລີຊາດ້ວຍລົດຮົບໄຟ ແລະ ມ້າໄຟ ເພື່ອອ້ອມເມືອງນ້ອຍໆບ່ອນທີ່ເພິ່ນຖືກສັດຕູປິດອ້ອມໄວ້; ໄດ້ມາຫາດານີເອນເມື່ອເພິ່ນຢູ່ໃນຣາຊສຳນັກຂອງກະສັດທີ່ບໍ່ນັບຖືພຣະເຈົ້າ ແລະ ສະແດວງຫາສະຕິປັນຍາຈາກພຣະເຈົ້າ ແລະ ເມື່ອເພິ່ນຖືກຖິ້ມລົງໄປໃຫ້ເປັນເຫຍື່ອຂອງຝູງສິງໂຕ. ທູດສະຫວັນໄດ້ມາຫາເປໂຕ ເມື່ອເພິ່ນລໍຖ້າການປະຫານຊີວິດໃນຄຸກມືດຂອງເຮໂຣດ; ໄດ້ມາຫາພວກນັກໂທດທີ່ເມືອງຟີລິບປອຍ; ໄດ້ມາຫາໂປໂລກັບເພື່ອນຮ່ວມເດີນທາງໃນຄືນທີ່ມີພະຍຸຮ້າຍກາງທະເລ; ໄດ້ມາຫາໂກເນລີໂອ ເພື່ອເປີດໃຈເພິ່ນໃຫ້ພ້ອມທີ່ຈະຮັບເອົາຂ່າວປະເສີດ; ໄດ້ມາຫາເປໂຕ ເພື່ອສົ່ງເພິ່ນອອກໄປປະກາດຂ່າວແຫ່ງຄວາມລອດພົ້ນແກ່ຄົນຕ່າງຊາດທີ່ເພິ່ນບໍ່ຮູ້ຈັກ. ໃນທຸກຍຸກທຸກສະໄໝ ເຫຼົ່າທູດສະຫວັນບໍຣິສຸດໄດ້ຊ່ວຍເຫຼືອຄົນຂອງພຣະເຈົ້າຢ່າງນີ້ແຫຼະ. {GC 512.1}

ທູດສະຫວັນປະຈຳຕົວ

ພຣະເຈົ້າຊົງກຳນົດທູດສະຫວັນປະຈຳຕົວ ໃຫ້ແກ່ທຸກຄົນທີ່ຕິດຕາມພຣະຄຣິສ. ທູດສະຫວັນປະຈຳຕົວເຫຼົ່ານີ້ເຮັດໜ້າທີ່ເຝົ້າຍາມ ເພື່ອປົກປ້ອງຄົນຊອບທຳຈາກອຳນາດຂອງມານຮ້າຍ. ແມ່ນແຕ່ຊາຕານເອງກ່ຍອມຮັບເລື່ອງນີ້ ເຊິ່ງເຫັນໄດ້ຈາກຖ້ອຍຄຳຂອງມັນທີ່ກ່າວວ່າ: “ໂຢບຢຳເກງພຣະເຈົ້າໂດຍບໍ່ຫວັງສິ່ງໃດເລີຍບໍ? ພຣະອົງຊົງລ້ອມຮົ້ວປ້ອງກັນລາວ ແລະ ຄອບຄົວກັບຊັບສິນທຸກຢ່າງຂອງລາວບໍ່ແມ່ນບໍ?” (ໂຢບ 1:9, 10 ດັດແປງຈາກສະບັບ TNCV). ພຣະທຳເພງສັນລະເສີນໄດ້ບັນລະຍາຍເຖິງວິທີການຂອງພຣະເຈົ້າ ໃນການປົກປ້ອງໄພ່ພົນຂອງພຣະອົງວ່າ: “ທູດຂອງພຣະເຢໂຮວາຢູ່ອ້ອມຮອບເຫຼົ່າຄົນທີ່ຢຳເກງພຣະອົງ ແລະ ຊົງຊ່ວຍເຂົາໃຫ້ພົ້ນຈາກໄພອັນຕະລາຍ.” (ເພງສັນລະເສີນ 34:7 ດັດແປງຈາກສະບັບ TH1940). ພຣະຜູ້ຊ່ວຍໃຫ້ລອດຊົງກ່າວເຖິງຜູ້ທີ່ເຊື່ອໃນພຣະອົງວ່າ: “ຈົ່ງລະວັງໃຫ້ດີ ຢ່າດູໝິ່ນເດັກນ້ອຍເຫຼົ່ານີ້ແມ່ນແຕ່ຜູ້ໜຶ່ງ, ເຮົາບອກພວກເຈົ້າວ່າ ເທວະດາປະຈຳຂອງເຂົາໃນສະຫວັນ ເຝົ້າຢູ່ສະເໝີຕໍ່ພຣະພັກພຣະບິດາເຈົ້າຂອງເຮົາ.” (ມັດທາຍ 18:10). ເຫຼົ່າທູດສະຫວັນທີ່ຖືກແຕ່ງຕັ້ງໃຫ້ຮັບໃຊ້ຄົນຂອງພຣະເຈົ້າ ສາມາດເຂົ້າເຝົ້າພຣະອົງໄດ້ທຸກເວລາ. {GC 512.2}

ເຖິງວ່າໄພ່ພົນຂອງພຣະເຈົ້າຕ້ອງປະເຊີນກັບອຳນາດການຫຼອກລວງ ແລະ ຄວາມມຸ່ງຮ້າຍທີ່ບໍ່ຢຸດຢັ້ງຂອງຊາຕານ ແລະ ຕ້ອງຕໍ່ສູ້ກັບກຳລັງແຫ່ງຄວາມຊົ່ວຮ້າຍທັງປວງ, ພວກເຂົາກໍຍັງໄດ້ຮັບການຢືນຢັນວ່າ ເຫຼົ່າທູດສະຫວັນຈະຄອຍປົກປັກຮັກສາຢູ່ສະເໝີ, ເຊິ່ງການຢືນຢັນນີ້ກໍຈຳເປັນ. ພຣະເຈົ້າປະທານພຣະສັນຍາແຫ່ງພຣະຄຸນ ແລະ ການປົກປ້ອງໃຫ້ແກ່ໄພ່ພົນຂອງພຣະອົງ ກໍຍ້ອນວ່າພວກເຂົາ

ຕ້ອງປະເຊີນກັບກອງກຳລັງຊົ່ວທີ່ມີຈຳນວນຫຼວງຫຼາຍ, ມີຄວາມມຸ່ງໝັ້ນ ແລະ ບໍ່ເຄີຍອິດເມື່ອຍ. ບໍ່ມີຄວາມປອດໄພສຳລັບຄົນທີ່ລະເລີຍ ຫຼື ບໍ່ຍອມຮັບຮູ້ເຖິງຄວາມປອງຮ້າຍ ແລະ ອຳນາດຂອງພວກມັນ. *{GC 513.1}*

ທູດຂອງຊາຕານຂັດຂວາງວຽກງານຂອງພຣະເຈົ້າ

ຕອນທີ່ຖືກສ້າງຂຶ້ນມາ ເຫຼົ່າທູດສະຫວັນທີ່ປ່ຽນພັກໄປຢູ່ຝ່າຍອະທຳກໍບໍ່ມີບາບ. ພວກມັນມີທຳມະຊາດ, ອຳນາດ ແລະ ສະຫງ່າຣາສີເທົ່າທຽມກັບເຫຼົ່າທູດສະຫວັນທີ່ໃນປັດຈຸບັນບົວລະບັດຮັບໃຊ້ພຣະເຈົ້າ. ແຕ່ຫຼັງຈາກລ່ວງລົງໄປຢູ່ໃນຄວາມບາບ, ພວກມັນກໍຮ່ວມມືກັນເພື່ອທຳລາຍມະນຸດ ແລະ ເຮັດໃຫ້ພຣະເຈົ້າເສື່ອມເສຍພຣະກຽດ. ເຫຼົ່າທູດຝ່າຍອະທຳໄດ້ເຂົ້າຮ່ວມກັບຊາຕານໃນການກະບົດ ແລະ ຖືກຂັບໄລ່ອອກຈາກສະຫວັນພ້ອມກັບມັນ. ພວກມັນໄດ້ຮ່ວມມືກັບຊາຕານຕະຫຼອດທຸກຍຸກສະໄໝໃນການຕໍ່ສູ້ກັບອຳນາດຂອງພຣະເຈົ້າ. ພຣະຄຳພີໄດ້ບອກເຮົາເຖິງການຮ່ວມມື ແລະ ການປົກຄອງຂອງຊາຕານ ແລະ ເຫຼົ່າທູດຂອງມັນ, ລະດັບຊັ້ນຕ່າງໆ, ຄວາມສະຫຼາດ ແລະ ແຜນອຸບາຍອັນຮ້າຍກາດຂອງພວກມັນ ທີ່ຄອຍປອງຮ້າຍຕໍ່ຄວາມສະຫງົບສຸກຂອງມະນຸດ. *{GC 513.2}*

ໜ້ອຍໜັກໜ້ອຍໜາ ທີ່ປະຫວັດສາດຂອງພຣະຄຳພີເດີມໄດ້ກ່າວເຖິງເຫຼົ່າທູດຂອງຊາຕານ ແລະ ການເຄື່ອນໄຫວຂອງພວກມັນ. ແຕ່ໃນສະໄໝທີ່ພຣະຄຣິສປະທັບຢູ່ໃນໂລກ, ທູດຝ່າຍອະທຳເຫຼົ່ານີ້ ໄດ້ສະແດງອຳນາດຂອງພວກມັນອອກມາຢ່າງເຫັນໄດ້ຊັດເຈນທີ່ສຸດ. ພຣະຄຣິສສະເດັດມາ ເພື່ອປະຕິບັດຕາມແຜນການໄຖ່ມະນຸດໃຫ້ລອດ ແຕ່ຊາຕານມຸ່ງໝັ້ນທີ່ຈະອ້າງສິດຂອງມັນໃນການຄອບຄອງໂລກນີ້. ມັນປະສົບຜົນສຳເລັດໃນການຊັກນຳຊົນຊາດທັງຫຼາຍທົ່ວໂລກ ໃນການຂາບໄຫວ້ບູຊາຮູບເຄົາລົບ; ມີແຕ່ດິນແດນປາແລັດສະໄຕທີ່ມັນບໍ່ສາມາດຊັກຈູງໄດ້ສຳເລັດ. ພຣະຄຣິສສະເດັດມາຍັງດິນແດນແຫ່ງນີ້, ອັນເປັນດິນແດນທີ່ບໍ່ຍອມສະຫຍົບຢ່າງສົມບູນຕໍ່ອຳນາດຂອງຜູ້ລໍ້ລວງ, ເພື່ອສ່ອງແສງແຫ່ງສະຫວັນແກ່ປະຊາຊົນ. ຢູ່ດິນແດນນີ້ ອຳນາດທັງສອງຝ່າຍທີ່ເປັນສັດຕູກັນໄດ້ອ້າງສິດໃນການປົກຄອງ. ພຣະເຢຊູຊົງອ້າແຂນແຫ່ງຄວາມຮັກອອກ ເພື່ອເຊື້ອເຊີນທຸກຄົນທີ່ເຕັມໃຈມາຮັບເອົາການໃຫ້ອະໄພ ແລະ ສັນຕິສຸກໃນພຣະອົງ. ສ່ວນກອງກຳລັງຝ່າຍຄວາມມືດເຫັນວ່າພວກມັນບໍ່ໄດ້ມີອຳນາດເໜືອທຸກສິ່ງ; ພວກມັນເຂົ້າໃຈວ່າ ຖ້າພາລະກິດຂອງພຣະຄຣິສສຳເລັດ ການປົກຄອງຂອງພວກມັນກໍຈະສິ້ນສຸດລົງໃນບໍ່ຊ້າ. ຊາຕານຄຳລາມເໝືອນສິງໂຕທີ່ຖືກລ່າມໂສ້ໄວ້ ແລະ ທ້າທາຍສະຫວັນ ໂດຍການສະແດງອຳນາດເໜືອຮ່າງກາຍ ແລະ ຈິດວິນຍານຂອງມະນຸດ. *{GC 513.3}*

ພຣະຄຳພີໃໝ່ຂຽນໄວ້ຢ່າງຈະແຈ້ງວ່າ ມີຜູ້ຄົນທີ່ເຄີຍຖືກຜີເຂົ້າສິງ, ເຊິ່ງຄົນເຫຼົ່ານັ້ນບໍ່ໄດ້ພຽງແຕ່ເຈັບປ່ວຍຍ້ອນພະຍາດໂຣຄາເທົ່ານັ້ນ. ພຣະຄຣິສຊົງເຂົ້າໃຈຢ່າງຖ່ອງແທ້ວ່າ ພຣະອົງກຳລັງຮັບມືກັບເຫຼົ່າທູດແຫ່ງຄວາມຊົ່ວຮ້າຍ ແລະ ກິດຈະການງານຂອງພວກມັນ. *{GC 514.1}*

ເລື່ອງໃນພຣະຄຳພີຂອງການປົ່ນປົວສອງຄົນທີ່ຖືກຜີເຂົ້າສິງຢູ່ເມືອງເຄຣາເຊນ[2] ສະແດງໃຫ້ເຫັນທັງຈຳນວນ, ອຳນາດ ແລະ ຄວາມຊົ່ວຮ້າຍຂອງເຫຼົ່າທູດຝ່າຍອະທຳ, ພ້ອມທັງຣິດອຳນາດ ແລະ ພຣະເມດຕາຂອງພຣະຄຣິສ. ຄົນທີ່ຖືກຜີສິງເຫຼົ່ານັ້ນບໍ່ຍອມຟັງໃຜ; ພວກເຂົາບິດຕົວດິ້ນຮົນ, ນ້ຳລາຍຟູມປາກ, ຮ້ອງໂຮ່ດ້ວຍຄວາມບ້າຄັ່ງ, ທຳຮ້າຍຕົນເອງ ແລະ ເປັນອັນຕະລາຍຕໍ່ທຸກຄົນທີ່ເຂົ້າມາໃກ້. ຮ່າງກາຍທີ່ບິດບ້ຽວ ແລະ ເຕັມໄປດ້ວຍບາດແຜເລືອດໄຫຼ ພ້ອມທັງຈິດໃຈທີ່ວຸ້ນວາຍຂາດສະຕິຂອງພວກເຂົາ ເປັນພາບທີ່ເຮັດໃຫ້ເຈົ້າແຫ່ງຄວາມມືດພໍໃຈຫຼາຍ. ຜີໂຕໜຶ່ງທີ່ຄວບຄຸມຜູ້ຊາຍທັງສອງຄົນໄດ້ເວົ້າວ່າ, ມັນ “ຊື່ກອງພົນ ເພາະວ່າພວກເຮົາມີຫຼາຍໂຕດ້ວຍກັນ.” (ມາຣະໂກ 5:9 ດັດແປງ

[2] ຜູ້ຂຽນໃຊ້ຊື່ “ກາດາຣາ” ຕາມມາຣະໂກ 5:1 ສະບັບ KJV.

ຈາກສະບັບ THSV). ໃນກອງທັບໂຣມ ໜຶ່ງກອງພົນປະກອບດ້ວຍທະຫານສາມພັນເຖິງຫ້າພັນ ຄົນ. ພັກພວກຂອງຊາຕານກໍຖືກຈັດຕັ້ງເປັນກອງເຊັ່ນກັນ ແລະ ກອງຜີໃສໂຄກທີ່ເຂົ້າສິງສອງຄົນນັ້ນ ມີ ຈຳນວນບໍ່ໜ້ອຍກວ່າໜຶ່ງກອງພົນ. *{GC 514.2}*

ເມື່ອພຣະເຢຊູຊົງບັນຊາແລ້ວ ຜີຮ້າຍກໍອອກຈາກສອງຄົນນັ້ນ. ພວກເຂົາຈຶ່ງມານັ່ງຢູ່ໃກ້ພຣະບາດຂອງ ພຣະຜູ້ຊ່ວຍໃຫ້ລອດຢ່າງສະຫງົບ, ສຸພາບອ່ອນໂยນ ແລະ ມີສະຕິຄົບຖ້ວນ. ແຕ່ຜີຮ້າຍທັງກອງພົນ ນັ້ນໄດ້ຮັບອະນຸຍາດໃຫ້ເຂົ້າສິງຝູງໝູ ແລ້ວກໍຕ້ອນພວກມັນໂດດລົງຕາຍໃນທະເລ. ຊາວເມືອງເຄຣາເຊນ ເຫັນວ່າ ການສູນເສຍໝູນັ້ນສຳຄັນກວ່າພຣະພອນແຫ່ງການຮັກສາຂອງພຣະຄຣິສ; ພວກເຂົາຈຶ່ງຂໍຮ້ອງ ໃຫ້ພຣະອົງສະເດັດອອກຈາກເຂດແດນຂອງພວກເຂົາ. ນີ້ແມ່ນຜົນທີ່ຊາຕານຕ້ອງການ; ມັນປຸກປັ່ນ ຄວາມຢ້ານກົວ ແລະ ຄວາມເຫັນແກ່ຕົວຂອງປະຊາຊົນ ໂດຍການກ່າວຫາພຣະເຢຊູວ່າເປັນຕົ້ນເຫດ ຂອງການສູນເສຍ ເພື່ອກີດກັນບໍ່ໃຫ້ພວກເຂົາຮັບຟັງພຣະຄຳຂອງພຣະອົງ. ຊາຕານຫາເລື່ອງທີ່ຈະ ກ່າວຫາຄຣິສຕຽນຢູ່ສະເໝີວ່າ ເປັນສາເຫດຂອງການສູນເສຍ ແລະ ຄວາມທຸກຍາກລຳບາກ ແທນທີ່ ຈະຍອມຮັບຄຳຕິຕຽນທີ່ຄວນຕົກໃສ່ຕົວມັນເອງ ແລະ ພັກພວກບໍລິວານຂອງມັນ. *{GC 514.3}*

ເຖິງຢ່າງໃດກໍຕາມ, ພຣະປະສົງຂອງພຣະຄຣິສບໍ່ໄດ້ລົ້ມເຫຼວ. ພຣະອົງຊົງອະນຸຍາດໃຫ້ຜີຮ້າຍ ທຳລາຍຝູງໝູ ເພື່ອເປັນການຕຳໜິຊາວຢິວທີ່ລ້ຽງສັດບໍ່ສະອາດເຫຼົ່ານີ້ເພື່ອຫາກຳໄລ. ຖ້າພຣະຄຣິສບໍ່ ໄດ້ຢັບຢັ້ງຫ້າມປາມພວກຜີຮ້າຍໄວ້ ພວກມັນຄົງຈະບໍ່ທຳລາຍພຽງແຕ່ຝູງໝູເທົ່ານັ້ນ ແຕ່ຈະຜັກດັນ ທັງຜູ້ລ້ຽງ ແລະ ເຈົ້າຂອງໝູລົງທະເລນຳ. ທີ່ຜູ້ລ້ຽງ ແລະ ເຈົ້າຂອງໝູລອດຊີວິດໄດ້ນັ້ນ ແມ່ນ ຍ້ອນພຣະເມດຕາ ແລະ ຣິດອຳນາດຂອງພຣະອົງທີ່ຊົງຊ່ວຍພວກເຂົາ. ຍິ່ງໄປກວ່ານັ້ນ, ພຣະອົງ ຊົງອະນຸຍາດໃຫ້ເຫດການນີ້ເກີດຂຶ້ນ ເພື່ອໃຫ້ພວກສາວົກຂອງພຣະອົງໄດ້ເຫັນອຳນາດອັນໂຫດຮ້າຍ ທາລຸນຂອງຊາຕານທີ່ມີເໜືອມະນຸດ ແລະ ສັດ. ພຣະຜູ້ຊ່ວຍໃຫ້ລອດຊົງປາຖະໜາໃຫ້ຜູ້ຕິດຕາມ ພຣະອົງ ຮູ້ຈັກສັດຕູທີ່ພວກເຂົາຈະຕ້ອງປະເຊີນພົບພໍ້ ເພື່ອຈະບໍ່ຖືກຫຼອກລວງ ແລະ ພ່າຍແພ້ຕໍ່ ກົນອຸບາຍຂອງມັນ. ພຣະອົງຍັງປາຖະໜາໃຫ້ປະຊາຊົນໃນເຂດນັ້ນ ໄດ້ເຫັນຣິດອຳນາດຂອງພຣະອົງທີ່ ສາມາດທຳລາຍເຄື່ອງຜູກມັດຂອງຊາຕານ ແລະ ປົດປ່ອຍຊະເລີຍຂອງມັນ. ເຖິງແມ່ນວ່າພຣະເຢຊູໄດ້ ສະເດັດອອກຈາກເຂດແດນນັ້ນໄປ ຜູ້ທີ່ໄດ້ຮັບການປົດປ່ອຍຈາກກອງຜີຮ້າຍນັ້ນກໍຍັງຢູ່ເພື່ອປະກາດເຖິງ ຄວາມເມດຕາຂອງພຣະອົງ ຜູ້ປະທານພອນໃຫ້ແກ່ປະຊາຊົນ. *{GC 515.1}*

ເຫດການອື່ນໆທີ່ຄ້າຍຄືກັນນີ້ ໄດ້ຮັບການບັນທຶກໄວ້ໃນພຣະຄຳພີ. ພຣະຜູ້ຊ່ວຍໃຫ້ລອດຜູ້ຊົງມີ ພຣະໄທເມດຕາໄດ້ປົ່ນປົວຫຼາຍຄົນທີ່ຖືກຜີສິງ, ຕົວຢ່າງເຊັ່ນ: ລູກສາວຂອງແມ່ຍິງຊາວຊີເຣຍ-ໂຟນີເຊຍ ທີ່ຖືກຜີສິງຢ່າງຮ້າຍແຮງ, ພຣະເຢຊູໄດ້ຂັບໄລ່ຜີໂຕນັ້ນອອກ ດ້ວຍພຣະຄຳຂອງພຣະອົງ;[3] "ຊາຍ ຜູ້ໜຶ່ງທີ່ມີຜີມານຮ້າຍເຂົ້າສິງ ທັງຕາບອດ ແລະ ປາກກືກ;"[4] ຊາຍໜຸ່ມຄົນໜຶ່ງທີ່ມີຜີສິງ ຈົນ ເຮັດໃຫ້ລາວປາກກືກ, ຜີນັ້ນມັກຈະ "ຊຸກລາວຕົກນ້ຳ ແລະ ຕົກໃສ່ໄຟເພື່ອຂ້າລາວ;"[5] ຄົນບ້າທີ່ ລົບກວນຄວາມສະຫງົບໃນວັນສະບາໂຕທີ່ທຳມະສາລາ ຢູ່ເມືອງກາເປນາອູມ, ຜູ້ຖືກ "ຜີມານຮ້າຍ ເຂົ້າສິງຢູ່ ເຊິ່ງເປັນວິນຍານສົກກະປົກ."[6] ຄົນເຫຼົ່ານີ້ໄດ້ຮັບການປົ່ນປົວດ້ວຍພຣະເມດຕາກະລຸນາ ຂອງພຣະອົງ. ໃນເກືອບທຸກກໍລະນີ, ພຣະຄຣິສຊົງກ່າວກັບຜີຮ້າຍເໝືອນວ່າ ຜີນັ້ນເປັນບຸກຄົນ ຜູ້ມີສະຕິປັນຍາ. ພຣະອົງສັ່ງໃຫ້ມັນອອກຈາກຜູ້ທີ່ມັນເຂົ້າສິງ ແລະ ບໍ່ໃຫ້ມັນທໍລະມານຜູ້ນັ້ນ

[3] ເບິ່ງ ມາຣະໂກ 7:26–30.
[4] ມັດທາຍ 12:22 LCV.
[5] ມາຣະໂກ 9:17–27 LCV.
[6] ລູກາ 4:33–36 LCV.

ອີກຕໍ່ໄປ. ເມື່ອຜູ້ນະມັດສະການທີ່ເມືອງກາເປນາອູມ ໄດ້ເຫັນຣິດອຳນາດອັນຍິ່ງໃຫຍ່ຂອງພຣະອົງ ແລ້ວ, "ຕ່າງກໍພາກັນປະຫຼາດໃຈ ແລະ ເວົ້າກັນວ່າ, 'ຖ້ອຍຄຳເຫຼົ່ານີ້ແມ່ນຫຍັງ? ເພາະວ່າເພິ່ນໄດ້ສັ່ງວິນຍານສົກກະປົກເຫຼົ່ານີ້ດ້ວຍສິດອຳນາດ ແລະ ຣິດເດດ ແລ້ວມັນກໍອອກມາ!'" (ລູກາ 4:36 LCV). *{GC 515.2}*

ພຣະຄຳພີສອນວ່າ ຄົນທີ່ຖືກຜີສິງມັກຈະຢູ່ໃນສະພາບທີ່ທຸກທໍລະມານຫຼາຍ, ແຕ່ກໍມີບາງກໍລະນີທີ່ບໍ່ໄດ້ເປັນຢ່າງນັ້ນ. ບາງຄົນໄດ້ຕ້ອນຮັບເອົາພະລັງຣິດເດດເໜືອທຳມະຊາດຈາກຊາຕານ, ແນ່ນອນວ່າ ຄົນເຫຼົ່ານີ້ບໍ່ມີການຕໍ່ສູ້ກັບພວກຜີຮ້າຍເລີຍ. ຄົນທີ່ມີວິນຍານໃນການທຳນວາຍກໍຈັດຢູ່ໃນພວກນີ້ ເຊັ່ນ: ຊີໂມນໝໍເວດມົນຄາຖາ, ເອລີມາໝໍເວດມົນຄາຖາ ແລະ ຍິງສາວທີ່ຕິດຕາມອາຈານໄປໂລກັບ ຊີລາ ຢູ່ເມືອງຟີລິບປອຍ. *{GC 516.1}*

ໄພອັນຕະລາຍ

ພຣະຄຳພີສອນໄວ້ຢ່າງຈະແຈ້ງ ແລະ ພຽງພໍແລ້ວວ່າ ພະຍາມານ ແລະ ເຫຼົ່າທູດຂອງມັນມີຢູ່ຈິງ ແລະ ເຄື່ອນໄຫວຢູ່. ແຕ່ຜູ້ທີ່ປະຕິເສດຄວາມຈິງນີ້ ເປັນຜູ້ທີ່ຕົກຢູ່ໃນໄພອັນຕະລາຍທີ່ສຸດຈາກອຳນາດຂອງວິນຍານຊົ່ວ. ຕາບໃດທີ່ພວກເຮົາບໍ່ຮູ້ເທົ່າທັນອຸບາຍຂອງພວກມັນ, ທູດຂອງຊາຕານກໍຈະໄດ້ປຽບຢ່າງໃຫຍ່ຫຼວງເກີນທີ່ຈະນຶກຄິດໄດ້. ຫຼາຍຄົນເຊື່ອຟັງຄຳແນະນຳຂອງຜີມານຮ້າຍ ໂດຍຄິດວ່າຕົນກຳລັງເຮັດຕາມສະຕິປັນຍາຂອງຕົນເອງ. ດ້ວຍເຫດນີ້, ເມື່ອພວກເຮົາເຂົ້າໃກ້ວາລະສຸດທ້າຍ ຊາຕານຈະໃຊ້ອຳນາດອັນຍິ່ງໃຫຍ່ທີ່ສຸດຂອງມັນເພື່ອຫຼອກລວງ ແລະ ທຳລາຍ ໂດຍການເຮັດໃຫ້ຄົນທົ່ວໂລກເຊື່ອວ່າມັນບໍ່ມີຢູ່ຈິງ. ນີ້ຄືແຜນການຂອງມັນທີ່ຈະເຊື່ອງຊ່ອນຕົວເອງ ແລະ ວິທີການປະຕິບັດພາລະກິດຂອງມັນ. *{GC 516.2}*

ສິ່ງທີ່ຊາຕານຢ້ານກົວຫຼາຍທີ່ສຸດ ແມ່ນການທີ່ພວກເຮົາຈະຮູ້ເທົ່າທັນກົນອຸບາຍຂອງມັນ. ເພື່ອປິດບັງຕົວເອງ ແລະ ຈຸດປະສົງທີ່ແທ້ຈິງ, ມັນໄດ້ສ້າງພາບພົດຂອງຕົນໃຫ້ຄົນເຫັນວ່າ "ຊາຕານ" ເປັນພຽງເລື່ອງຕະຫຼົກ ຫຼື ເລື່ອງໜ້າດູໝິ່ນເທົ່ານັ້ນ. ມັນພໍໃຈເມື່ອຄົນວາດພາບຂອງມັນເປັນຕົວຕະຫຼົກ ຫຼື ສິ່ງໜ້າກຽດຊັງທີ່ມີຮູບຮ່າງປະຫຼາດເຄິ່ງສັດເຄິ່ງຄົນ. ມັນພໍໃຈເມື່ອໄດ້ຍິນຄົນທີ່ຄິດວ່າຕົນສະຫຼາດ ແລະ ມີຄວາມຮູ້ ເອົາຊື່ຂອງມັນມາເວົ້າຕະຫຼົກຄຶບຂັນ ຫຼື ໃຊ້ໃນການດູໝິ່ນເຍາะເຍີ້ຍ. *{GC 516.3}*

ຍ້ອນມັນເຊື່ອງຊ່ອນຕົວມັນເອງດ້ວຍຄວາມຊຳນານທີ່ສຸດ ຄົນຈຶ່ງພາກັນຖາມວ່າ: "ຊາຕານມີຢູ່ຈິງແທ້ບໍ?" ການທີ່ວົງການສາສະໜາຍອມຮັບທິດສະດີທີ່ຂັດແຍ້ງກັບຂໍ້ຄວາມອັນຈະແຈ້ງຂອງພຣະຄຳພີສະແດງໃຫ້ເຫັນເຖິງຄວາມສຳເລັດຂອງມັນ. ຜູ້ທີ່ຊາຕານສາມາດຄວບຄຸມຈິດໃຈງ່າຍທີ່ສຸດ ຄືຜູ້ທີ່ຮູ້ເທົ່າບໍ່ເຖິງອິດທິພົນຂອງມັນ. ດ້ວຍເຫດນີ້, ພຣະຄຳຂອງພຣະເຈົ້າຈຶ່ງໄດ້ເປີດເຜີຍຕົວຢ່າງຫຼາຍກໍລະນີ ກ່ຽວກັບວຽກງານອັນຊົ່ວຮ້າຍຂອງຊາຕານ ເພື່ອເປີດໂປງກຳລັງອັນລີ້ລັບຂອງມັນ ແລະ ເຕືອນພວກເຮົາໃຫ້ລະວັງການໂຈມຕີຂອງມັນ. *{GC 517.1}*

ປອດໄພເມື່ອຕິດຕາມພຣະເຢຊູ

ຣິດອຳນາດ ແລະ ການປອງຮ້າຍຂອງຊາຕານ ພ້ອມດ້ວຍເຫຼົ່າທູດຂອງມັນອາດເຮັດໃຫ້ພວກເຮົາຢ້ານກົວໄດ້, ແຕ່ເຮົາບໍ່ຕ້ອງຢ້ານ ເພາะພຣະຜູ້ໄຖ່ຂອງພວກເຮົາຊົງມີຣິດອຳນາດທີ່ຍິ່ງໃຫຍ່ກວ່າຊາຕານ ແລະ ພວກເຮົາສາມາດລີ້ໄພ ແລະ ຮັບການຊ່ວຍກູ້ໄດ້ຈາກພຣະອົງ. ພວກເຮົາມີຄວາມລະມັດລະວັງຈຶ່ງລົງກອນໃສ່ກະແຈປ້ານເຮືອນ ເພື່ອປົກປ້ອງຊັບສິນ ແລະ ຊີວິດຄົນໃນຄອບຄົວຈາກຄົນຊົ່ວ, ແຕ່ພວກເຮົາແທບບໍ່ໄດ້ຄິດເຖິງວິນຍານຊົ່ວ ທີ່ຊອກຫາໂອກາດເຂົ້າຫາພວກເຮົາຢູ່ຕະຫຼອດເວລາ. ໂດຍກຳລັງຂອງ

ຕົນເອງແລ້ວ ພວກເຮົາບໍ່ສາມາດຕ້ານທານການໂຈມຕີຂອງພວກມັນໄດ້ເລີຍ. ຖ້າໄດ້ຮັບອະນຸຍາດ ພວກມັນສາມາດລົບກວນຈິດໃຈ, ທໍລະມານຮ່າງກາຍ, ທຳລາຍຊັບສິນ ແລະ ຊີວິດຂອງພວກເຮົາ. ຄວາມເພິ່ງພໍໃຈອັນດຽວຂອງພວກມັນ ແມ່ນການສ້າງຄວາມທຸກທໍລະມານ ແລະ ການທຳລາຍ. ບາງຄົນຕໍ່ຕ້ານພຣະປະສົງຂອງພຣະເຈົ້າ ແລະ ຍິນຍອມຕໍ່ການລໍ້ລວງຂອງຊາຕານ ຈົນພຣະເຈົ້າຕ້ອງປະປ່ອຍພວກເຂົາໃຫ້ວິນຍານຊົ່ວຄອບງຳ. ຄົນເຫຼົ່ານັ້ນຢູ່ໃນສະພາບທີ່ໜ້າຢ້ານກົວແທ້ ໆ. ແຕ່ຜູ້ທີ່ຕິດຕາມພຣະຄຣິສຈະປອດໄພສະເໝີ ພາຍໃຕ້ການປົກປັກຮັກສາຂອງພຣະອົງ. ພຣະເຈົ້າສົ່ງທູດສະຫວັນຜູ້ມີຣິດອຳນາດມາປົກປ້ອງພວກເຂົາ. ຊາຕານມານຮ້າຍກໍບໍ່ສາມາດທະລຸດ່ານທີ່ພຣະເຈົ້າຈັດວາງໄວ້ອ້ອມຮອບໄພ່ພົນຂອງພຣະອົງໄດ້. *{GC 517.2}*

32

ຫຸ້ມດັກຂອງຊາຕານ

ຊາຕານສ້າງສິ່ງດຶງດູດຄວາມສົນໃຈ

ຄວາມຂັດແຍ້ງອັນຍິ່ງໃຫຍ່ລະຫວ່າງພຣະຄຣິສກັບຊາຕານ ເຊິ່ງດຳເນີນມາເປັນເວລາເກືອບຫົກພັນປີນັ້ນ ກຳລັງຈະສິ້ນສຸດລົງໃນບໍ່ຊ້າ. ຊາຕານກຳລັງເພີ່ມຄວາມພະຍາຍາມເປັນສອງເທົ່າ ເພື່ອທຳລາຍວຽກງານຂອງພຣະຄຣິສທີ່ຊົ່ງກະທຳເພື່ອມະນຸດ ແລະ ເພື່ອດັກຈັບຈິດວິນຍານໃຫ້ຕິດກັບດັກຂອງມັນ. ຊາຕານມຸ່ງໝາຍທີ່ຈະເຮັດໃຫ້ຜູ້ຄົນຕົກຢູ່ໃນຄວາມມືດ ແລະ ບໍ່ຍອມກັບໃຈໃໝ່ ຈົນກວ່າການວິງວອນຂອງພຣະຜູ້ຊ່ວຍໃຫ້ລອດຈະຈົບສິ້ນລົງ ແລະ ບໍ່ມີໂອກາດທີ່ຈະຮັບພຣະຄຸນຈາກການໄຖ່ບາບອີກຕໍ່ໄປ. *{GC 518.1}*

ເມື່ອບໍ່ມີຄວາມພະຍາຍາມພິເສດທີ່ຈະຕໍ່ຕ້ານອຳນາດຂອງມັນ ແລະ ເມື່ອຊາວໂລກ ແລະ ຄົນໃນຄຣິສຕະຈັກມີທ່າທີເມີນເສີຍຕໍ່ຄວາມຈິງ, ຊາຕານກໍບໍ່ຮູ້ສຶກກັງວົນ ເພາະມັນບໍ່ຢ້ານທີ່ຈະສູນເສຍຜູ້ທີ່ມັນຄວບຄຸມໄວ້ເປັນຂະເລີຍ. ແຕ່ເມື່ອຜູ້ຄົນເລີ່ມສົນໃຈເລື່ອງຊີວິດນິຣັນ ແລະ ຖາມວ່າ “ຂ້ານ້ອຍຕ້ອງເຮັດແນວໃດຈຶ່ງຈະລອດໄດ້?” ມັນກໍຈະຢູ່ທີ່ນັ້ນ ແລະ ຈະພະຍາຍາມໃຊ້ອຳນາດຂອງມັນຕໍ່ສູ້ກັບອຳນາດຂອງພຣະຄຣິສ ແລະ ການຊົ່ງນຳຂອງພຣະວິນຍານບໍຣິສຸດ. *{GC 518.2}*

ພຣະຄຳພີກ່າວວ່າ ໃນຄາວໜຶ່ງເມື່ອເຫຼົ່າທູດສະຫວັນມາເຝົ້າພຣະຜູ້ເປັນເຈົ້າ, ຊາຕານກໍມານຳ. (ເບິ່ງ ໂຢບ 1:6). ມັນບໍ່ໄດ້ມາເພື່ອຂາບໄຫວ້ພຣະເຈົ້າອົງນິຣັນ ແຕ່ມາເພື່ອສົ່ງເສີມແຜນການອັນຊົ່ວຮ້າຍຂອງມັນຕໍ່ຄົນຊອບທຳ. ມັນມີຈຸດປະສົງອັນດຽວກັນນີ້ ເມື່ອມະນຸດມາຮ່ວມນະມັດສະການພຣະເຈົ້າ; ເຖິງແມ່ນເບິ່ງບໍ່ເຫັນດ້ວຍຕາ, ແຕ່ມັນເຮັດວຽກຢ່າງບໍ່ຢຸດຢັ້ງ ເພື່ອຄວບຄຸມຈິດໃຈຂອງຜູ້ນະມັດສະການ; ຄືກັບນາຍພົນຜູ້ຊຳນານ ມັນວາງແຜນໄວ້ລ່ວງໜ້າ, ເມື່ອເຫັນອາຈານຄົ້ນຄວ້າພຣະຄຳຂອງພຣະເຈົ້າ, ມັນຈົດປະເດັນສຳຄັນຂອງຄຳເທດສະໜາ; ແລ້ວມັນໃຊ້ເລ່ລ່ຽມທຸກຢ່າງ ເພື່ອຄວບຄຸມສະຖານະການ ຈົນຄວາມຈິງບໍ່ສາມາດເຂົ້າເຖິງຈິດໃຈຂອງຜູ້ທີ່ມັນກຳລັງຈະຫຼອກລວງໃນປະເດັນນັ້ນ. ຜູ້ທີ່ຕ້ອງການຄຳເຕືອນຫຼາຍທີ່ສຸດຈະມີວຽກດ່ວນທີ່ຕ້ອງເຮັດ ຫຼື ຈະຖືກຂັດຂວາງດ້ວຍວິທີອື່ນ ເພື່ອບໍ່ໃຫ້ລາວໄດ້ຍິນຖ້ອຍຄຳທີ່ອາດຊ່ວຍນຳພາລາວໄປສູ່ຊີວິດ. *{GC 518.3}*

ຊາຕານເຫັນວ່າ ບັນດາຜູ້ຮັບໃຊ້ຂອງພຣະເຈົ້າກຳລັງແບກພາລະອັນໜັກໜ່ວງ ເນື່ອງຈາກຄວາມມືດຝ່າຍຈິດວິນຍານທີ່ປົກຄຸມປະຊາຊົນ. ມັນໄດ້ຍິນຄຳອະທິຖານອັນຮ້ອນຮົນຂອງພວກເຂົາທີ່ທູນຂໍພຣະຄຸນ ແລະ ຣິດເດດຈາກພຣະເຈົ້າ ເພື່ອທຳລາຍມົນສະກົດຂອງມັນທີ່ເຮັດໃຫ້ປະຊາຊົນເມີນເສີຍ, ງຽດຄ້ານ ແລະ ບໍ່ເຝົ້າລະວັງ. ຈາກນັ້ນ, ມັນກໍໃຊ້ອຸບາຍອັນແນບນຽນ ດ້ວຍຄວາມກະຕືລືລົ້ນທີ່ເພີ່ມຂຶ້ນຢູ່ບໍ່ຂາດ. ມັນລໍ້ລວງມະນຸດໃຫ້ປ່ອຍຕົວໃຫ້ກິນດື່ມຕາມໃຈປາຖະໜາ ຫຼື ໃຫ້ສະໜອງຄວາມຢາກ

ໂດຍທາງໃດທາງໜຶ່ງ. ດ້ວຍເຫດນີ້, ຈິດສຳນຶກຂອງພວກເຂົາຈຶ່ງມຶນຊາ ຈົນບໍ່ໄດ້ຍິນສິ່ງທີ່ພວກເຂົາຈຳເປັນຕ້ອງຮຽນຮູ້ຫຼາຍທີ່ສຸດ. {GC 519.1}

ຊາຕານຮູ້ດີວ່າ ທຸກຄົນທີ່ມັນສາມາດຊັກຈູງໃຫ້ລະເລີຍການອະທິຖານ ແລະ ການຄົ້ນຄວ້າພຣະຄຳພີກໍຈະພ່າຍແພ້ຕໍ່ການໂຈມຕີຂອງມັນ; ສະນັ້ນ, ມັນຈຶ່ງຄິດຄົ້ນທຸກວິທີເພື່ອດຶງດູດຄວາມສົນໃຈຂອງຄົນ. ຕະຫຼອດທຸກຍຸກສະໄໝ ມີຄົນຈຳພວກໜຶ່ງທີ່ອ້າງວ່າຕົນເປັນຄົນທີ່ຢຳເກງພຣະເຈົ້າ, ແຕ່ແທນທີ່ຈະສຶກສາຄົ້ນຄວ້າເພື່ອຮູ້ຄວາມຈິງຫຼາຍຂຶ້ນ, ພວກເຂົາພັດປະຕິບັດສາສະໜາ ໂດຍການຊອກຫາຂໍ້ບົກຜ່ອງດ້ານນິໄສ ຫຼື ຄວາມຜິດພາດໃນຄວາມເຊື່ອຂອງຄົນທີ່ຕົນບໍ່ເຫັນພ້ອມນຳ; ຄົນເຫຼົ່ານີ້ເປັນຜູ້ຊ່ວຍທີ່ສຳຄັນຂອງຊາຕານ. ພວກທີ່ກ່າວໂທດພີ່ນ້ອງກໍບໍ່ໄດ້ມີໜ້ອຍ ແລະ ພວກເຂົາຈະຫ້າວຫັນເປັນພິເສດ ເມື່ອພຣະເຈົ້າຊົງເຄື່ອນໄຫວດ້ວຍຣິດອຳນາດ ແລະ ຜູ້ຮັບໃຊ້ຂອງພຣະອົງກຳລັງນະມັດສະການພຣະອົງດ້ວຍໃຈຈິງ. ພວກເຂົາຈະບິດເບືອນຄຳເວົ້າ ແລະ ການກະທຳຂອງຄົນທີ່ຮັກ ແລະ ປະຕິບັດຕາມຫຼັກຄວາມຈິງ. ພວກເຂົາຈະກ່າວຫາຜູ້ຮັບໃຊ້ຂອງພຣະຄຣິສທີ່ກະຕືລືລົ້ນ ແລະ ປະຕິເສດຕົນເອງ ວ່າເປັນຜູ້ຖືກຫຼອກລວງ ຫຼື ເປັນຜູ້ຫຼອກລວງຄົນອື່ນ. ວຽກງານຂອງພວກເຂົາແມ່ນການໃສ່ຮ້າຍປ້າຍສີໃນເຈດຕະນາທີ່ຢູ່ເບື້ອງຫຼັງການກະທຳອັນດີງາມທຸກຢ່າງ, ການປ່ອຍຂ່າວລື ແລະ ການປູກຝັງຄວາມສົງໄສໃນຈິດໃຈຂອງຄົນທີ່ຂາດປະສົບການ. ພວກເຂົາຈະພະຍາຍາມທຸກວິທີທາງ ເພື່ອເຮັດໃຫ້ສິ່ງທີ່ບໍຣິສຸດ ແລະ ຊອບທຳ ຖືກຜູ້ຄົນເບິ່ງວ່າເປັນສິ່ງທີ່ສົກກະປົກ ແລະ ຫຼອກລວງ. {GC 519.2}

ແຕ່ບໍ່ຈຳເປັນທີ່ຜູ້ໃດຈະຖືກຫຼອກລວງງ່າຍກັບຄົນມັກຈັບຜິດເຫຼົ່ານີ້. ເຮົາສາມາດເຫັນໄດ້ຢ່າງຈະແຈ້ງວ່າພວກເຂົາເປັນລູກຂອງຜູ້ໃດ, ເຮັດຕາມແບບຢ່າງຂອງຜູ້ໃດ ແລະ ເຮັດວຽກໃຫ້ກັບໃຜ. “ພວກເຈົ້າຈະຮູ້ຈັກຄົນເຫຼົ່ານີ້ດ້ວຍການກະທຳຂອງເຂົາ.” (ມັດທາຍ 7:16). ການປະພຶດຂອງພວກເຂົາຄ້າຍຄືກັບຊາຕານ ຜູ້ກ່າວຫາດ້ວຍພຶດອັນຮ້າຍແຮງ, ກໍຄື “ຜູ້ທີ່ກ່າວໂທດພວກພີ່ນ້ອງຂອງເຮົາ.” (ພຣະນິມິດ 12:10). {GC 519.3}

ການນຳໃຊ້ພຣະຄຳພີໃນທາງທີ່ຜິດ

ຊາຕານມີຕົວແທນຫຼາຍຄົນ ພ້ອມທີ່ຈະສະເໜີຄວາມຜິດທຸກຮູບແບບເພື່ອດັກຈັບຜູ້ຄົນ ເຊິ່ງລວມເຖິງຄຳສອນນອກຮີດທີ່ຖືກກະກຽມໄວ້ໃຫ້ເໝາະສົມກັບລົດສະນິຍົມ ແລະ ຄວາມສາມາດຂອງຜູ້ທີ່ມັນຢາກທຳລາຍ. ແຜນການຂອງມັນແມ່ນການນຳເອົາຄົນທີ່ບໍ່ຈິງໃຈ ແລະ ບໍ່ໄດ້ຮັບການບັງເກີດໃໝ່ເຂົ້າມາໃນຄຣິສຕະຈັກ ເພື່ອສົ່ງເສີມໃຫ້ສະມາຊິກຂາດຄວາມເຊື່ອ ແລະ ເກີດຄວາມສົງໄສ, ພ້ອມທັງຂັດຂວາງທຸກຄົນທີ່ປາຖະໜາຢາກເຫັນວຽກງານຂອງພຣະເຈົ້າກ້າວໜ້າ ແລະ ຢາກກ້າວໜ້າໄປພ້ອມກັບວຽກງານນັ້ນ. ຫຼາຍຄົນທີ່ບໍ່ມີຄວາມເຊື່ອອັນແທ້ຈິງໃນພຣະເຈົ້າ ຫຼື ໃນພຣະຄຳຂອງພຣະອົງ ໄດ້ເຫັນດີກັບຫຼັກຄວາມຈິງບາງປະການ ແລະ ປະກາດວ່າ ຕົນເປັນຄຣິສຕຽນ; ດັ່ງນັ້ນ, ພວກເຂົາຈຶ່ງສາມາດສອດແຊກຄຳສອນຜິດໆ ໂດຍອ້າງວ່າເປັນຄຳສອນຈາກພຣະຄຳພີ. {GC 520.1}

ວິທີຫຼອກລວງທີ່ປະສົບຜົນສຳເລັດຫຼາຍທີ່ສຸດຢ່າງໜຶ່ງຂອງຊາຕານຄື ການຫຼອກຄົນໃຫ້ຫຼົງເຊື່ອວ່າມະນຸດຈະເຊື່ອແບບໃດກໍບໍ່ມີຜົນຫຍັງເລີຍ. ຊາຕານຮູ້ວ່າ ເມື່ອຜູ້ໃດຮັກຄວາມຈິງ ແລະ ຮັບເອົາຄວາມຈິງເຂົ້າມາໃນໃຈ, ຄວາມຈິງນັ້ນຈະຊຳລະຈິດໃຈຂອງເຂົາໃຫ້ບໍຣິສຸດ; ສະນັ້ນ, ມັນຈຶ່ງພະຍາຍາມຢ່າງບໍ່ຢຸດຢັ້ງ ເພື່ອນຳເອົາທິດສະດີທີ່ບໍ່ຈິງ, ເລື່ອງນິຍາຍ ແລະ ຂ່າວປະເສີດປອມເຂົ້າມາແທນທີ່. ຕັ້ງແຕ່ຕົ້ນມາ, ຜູ້ຮັບໃຊ້ຂອງພຣະເຈົ້າຕ້ອງຕໍ່ສູ້ກັບຄົນສອນທຽມເທັດ ບໍ່ແມ່ນພຽງແຕ່ເພາະພວກເຂົາມຸ່ງຮ້າຍເທົ່ານັ້ນ, ແຕ່ເພາະພວກເຂົາປູກຝັງຄວາມບໍ່ຈິງທີ່ເປັນອັນຕະລາຍຕໍ່ຈິດວິນຍານ. ເອລີຢາ, ເຢເຣມີຢາ ແລະ ໂປໂລມີຄວາມເດັດດ່ຽວ ແລະ ບໍ່ຢ້ານກົວທີ່ຈະຕໍ່ຕ້ານຜູ້ທີ່ພະຍາຍາມຫັນຄວາມສົນໃຈຂອງຜູ້ຄົນ

ອອກຈາກພຣະຄຳຂອງພຣະເຈົ້າ. ຄົນບໍຣິສຸດເຫຼົ່ານີ້ຜູ້ປົກປ້ອງຄວາມຈິງກໍບໍ່ຍອມຮັບແນວຄິດທີ່ວ່າ ເຊື່ອແນວໃດກໍໄດ້. {GC 520.2}

ການຕີຄວາມໝາຍພຣະຄຳພີທີ່ຄຸມເຄືອ ແລະ ບໍ່ມີຫຼັກຖານ ລວມທັງທິດສະດີທາງສາສະໜາທີ່ຂັດແຍ້ງກັນຫຼາຍຢ່າງ ເຊິ່ງພົບເຫັນໃນວົງການຄຣິສຕຽນທົ່ວໄປ ລ້ວນແຕ່ເປັນຜົນງານຂອງສັດຕູຕົວສະກາດຂອງພວກເຮົາ ທີ່ຕ້ອງການເຮັດໃຫ້ຄົນສັບສົນ ເພື່ອພວກເຂົາຈະບໍ່ເຂົ້າໃຈຄວາມຈິງ. ຄວາມແຕກແຍກ ແລະ ການແບ່ງພັກແບ່ງພວກທີ່ມີຢູ່ລະຫວ່າງຄຣິສຕະຈັກຕ່າງໆ ສ່ວນຫຼາຍແລ້ວເປັນຍ້ອນທຳນຽມທີ່ຄົນມັກບິດເບືອນພຣະຄຳພີ ເພື່ອສະໜັບສະໜູນແນວຄິດທີ່ຕົນນິຍົມ. ແທນທີ່ຈະສຶກສາພຣະຄຳຂອງພຣະເຈົ້າຢ່າງຖີ່ຖ້ວນດ້ວຍຄວາມນອບນ້ອມຖ່ອມໃຈ ເພື່ອຮູ້ຈັກນ້ຳພຣະໄທຂອງພຣະອົງ, ຫຼາຍຄົນພັດຊອກຫາແຕ່ສິ່ງທີ່ແປກປະຫຼາດ ຫຼື ສິ່ງໃໝ່ໆເທົ່ານັ້ນ. {GC 520.3}

ເພື່ອສະໜັບສະໜູນຄຳສອນທີ່ຜິດພ້ຽນ ຫຼື ການປະພຶດທີ່ບໍ່ເໝາະສົມກັບການເປັນຄຣິສຕຽນ, ບາງຄົນຈະຍົກເອົາຂໍ້ພຣະຄຳພີທີ່ແຍກອອກຈາກເນື້ອຫາ ຫຼື ອ້າງອີງພຽງເຄິ່ງຂໍ້ເພື່ອພິສູດຈຸດຢືນຂອງຕົນ ທັງໆທີ່ຂໍ້ຄວາມທີ່ບໍ່ໄດ້ຍົກມານັ້ນສະແດງເຖິງຄວາມໝາຍທີ່ກົງກັນຂ້າມ. ພວກເຂົາມີເລ່ຫຼ່ຽມເໝືອນໆ, ເອົາຂໍ້ພຣະຄຳພີທີ່ບໍ່ກ່ຽວຂ້ອງກັນມາອ້າງ ເພື່ອປົກປິດຄວາມປາຖະໜາຝ່າຍເນື້ອໜັງ; ດ້ວຍວິທີນີ້, ຫຼາຍຄົນຈຶ່ງຈົງໃຈບິດເບືອນພຣະຄຳຂອງພຣະເຈົ້າ. ສ່ວນຄົນອື່ນທີ່ມີຄວາມຄິດສ້າງສັນກໍເອົາຄຳອຸປະມາ ແລະ ສັນຍະລັກຈາກພຣະຄຳພີມາແປຄວາມໝາຍຕາມໃຈມັກ ໂດຍບໍ່ສົນໃຈວ່າພຣະຄຳພີຈະອະທິບາຍຄວາມໝາຍຂອງສິ່ງເຫຼົ່ານັ້ນວ່າແນວໃດ ແລ້ວກໍອ້າງວ່າຄວາມຄິດເຫັນຂອງຕົນເປັນຄຳສອນຈາກພຣະຄຳພີ. {GC 521.1}

ພຣະຄຳພີທັງເຫຼັ້ມເປັນແນວທາງທີ່ຖືກຕ້ອງ

ເມື່ອໃດທີ່ການສຶກສາພຣະຄຳພີເລີ່ມຕົ້ນໂດຍປາສະຈາກການອະທິຖານ, ຄວາມນອບນ້ອມຖ່ອມຕົນ ແລະ ຈິດໃຈທີ່ພ້ອມຮຽນຮູ້, ຂໍ້ພຣະຄຳທີ່ງ່າຍທີ່ສຸດ ແລະ ຈະແຈ້ງທີ່ສຸດກໍຈະຖືກເຂົ້າໃຈຜິດໄປ ແລະ ຂໍ້ພຣະຄຳພີທີ່ຍາກທີ່ສຸດກໍຈະຖືກຕີຄວາມໝາຍຜິດພ້ຽນໄປຈາກຄວາມໝາຍທີ່ແທ້ຈິງ. ພວກຜູ້ນຳໃນລະບອບສັນຕະປາປາ ເລືອກເອົາແຕ່ຂໍ້ພຣະຄຳພີທີ່ພວກເຂົາຢາກໃຊ້ ແລະ ແປຄວາມໝາຍຕາມໃຈຕົນເອງແລ້ວເອົາໄປສອນປະຊາຊົນ ແຕ່ພັດຫ້າມບໍ່ໃຫ້ປະຊາຊົນອ່ານພຣະຄຳພີ ແລະ ເຂົ້າໃຈຄວາມຈິງດ້ວຍຕົນເອງ.[1] ປະຊາຊົນຄວນໄດ້ຮັບພຣະຄຳພີທັງເຫຼັ້ມຕາມທີ່ຂຽນໄວ້. ຖ້າບໍ່ມີການສອນພຣະຄຳພີເລີຍກໍຍັງດີກວ່າການສອນພຣະຄຳພີທີ່ບິດເບືອນຢ່າງຮ້າຍແຮງແບບນີ້. {GC 521.2}

ພຣະເຈົ້າຊົງຈັດຕຽມພຣະຄຳພີໄວ້ເປັນຄູ່ມືສຳລັບທຸກຄົນທີ່ປາຖະໜາຢາກຮູ້ຈັກນ້ຳພຣະໄທຂອງພຣະຜູ້ສ້າງຂອງຕົນ. ພຣະເຈົ້າປະທານຄຳພະຍາກອນອັນແນ່ນອນໃຫ້ແກ່ມະນຸດ; ບັນດາທູດສະຫວັນ ແລະ ແມ່ນແຕ່ອົງພຣະຄຣິສໄດ້ເປີດເຜີຍໃຫ້ດານີເອນ ແລະ ໂຢຮັນຮູ້ເຖິງສິ່ງທີ່ຈະເກີດຂຶ້ນໃນບໍ່ຊ້າ. ເລື່ອງສຳຄັນຕ່າງໆທີ່ກ່ຽວຂ້ອງກັບຄວາມລອດພົ້ນຂອງພວກເຮົາ ບໍ່ໄດ້ຖືກປະໄວ້ໃຫ້ເປັນເລື່ອງເລິກລັບທີ່ເຂົ້າໃຈຍາກ. ພຣະເຈົ້າບໍ່ໄດ້ເປີດເຜີຍສິ່ງເຫຼົ່ານີ້ໃນລັກສະນະທີ່ຈະເຮັດໃຫ້ຜູ້ທີ່ຊອກຫາຄວາມຈິງດ້ວຍໃຈສັດຊື່ ຕ້ອງສັບສົນງົງງັນຈົນພາໃຫ້ຫຼົງໄປ. ອົງພຣະຜູ້ເປັນເຈົ້າຊົງກ່າວຜ່ານຜູ້ເຜີຍພຣະທຳຮາບາກຸກວ່າ: “ຈົ່ງຂຽນນິມິດນັ້ນລົງໄປ . . . ໃຫ້ກະຈ່າງ ເພື່ອໃຫ້ຄົນທີ່ແລ່ນອ່ານໄດ້ຄ່ອງ.” (ຮາບາກຸກ 2:2 ດັດແປງຈາກສະບັບ TKJV). ພຣະຄຳຂອງພຣະເຈົ້າກະຈ່າງຊັດເຈນສຳລັບທຸກຄົນທີ່ສຶກສາດ້ວຍການຖ່ອມໃຈ

[1] ການຫ້າມບໍ່ໃຫ້ປະຊາຊົນອ່ານພຣະຄຳພີ ແມ່ນນະໂຍບາຍກ່ອນສະພາວະຕິກັນທີສອງ. ປັດຈຸບັນ, ຄຣິສຕະຈັກກາໂຕລິກອະນຸຍາດໃຫ້ອ່ານພຣະຄຳພີໄດ້ ແຕ່ຍັງສະຫງວນສິດໃນການຕີຄວາມໝາຍຕາມປະເພນີຂອງຕົນ.

ລົງ ແລະ ການອະທິຖານ. ທຸກຄົນທີ່ມີຄວາມຈິງໃຈຢ່າງແທ້ຈິງກໍຈະພົບແສງແຫ່ງຄວາມຈິງ. “ແສງ ສະຫວ່າງສ່ອງແຈ້ງໃສ່ຄົນຊອບທຳ.” (ເພງສັນລະເສີນ 97:11). ບໍ່ມີຄຣິສຕະຈັກໃດສາມາດເຕີບໃຫຍ່ຂຶ້ນ ທາງດ້ານຄວາມບໍຣິສຸດໄດ້ ຖ້າສະມາຊິກບໍ່ໄດ້ຊອກຫາຄວາມຈິງດ້ວຍຄວາມຮ້ອນຮົນ ເໝືອນດັ່ງກຳລັງ ຊອກຫາຊຸມຊັບທີ່ເຊື່ອງໄວ້. *{GC 521.3}*

ດ້ວຍການກ່າວອ້າງ “ຄວາມໃຈກວ້າງ,” ຫຼາຍຄົນຈຶ່ງຖືກບັງຕາ ຈົນເບິ່ງບໍ່ເຫັນອຸບາຍຫຼອກລວງ ຂອງຊາຕານ ໃນຂະນະທີ່ມັນພວມເຮັດວຽກຢ່າງບໍ່ຢຸດບໍ່ເຊົາ ເພື່ອບັນລຸເປົ້າໝາຍຂອງມັນ. ເມື່ອຊາຕານ ສາມາດເອົາແນວຄິດຂອງມະນຸດ ມາແທນທີ່ຄຳສອນຈາກພຣະຄຳພີ ຜູ້ຄົນກໍປະຖິ້ມພຣະບັນຍັດຂອງ ພຣະເຈົ້າ, ບັນດາຄຣິສຕະຈັກທັງຫຼາຍຈຶ່ງຕົກເປັນທາດຂອງຄວາມບາບ ເຖິງແມ່ນວ່າພວກເຂົາອວດອ້າງ ວ່າຕົນມີເສລີພາບກໍຕາມ. *{GC 522.1}*

ສຳລັບຫຼາຍຄົນການຄົ້ນຄວ້າທາງວິທະຍາສາດໄດ້ກາຍເປັນເຫດໃຫ້ຖືກສາບແຊ່ງ. ພຣະເຈົ້າຊົງເປີດ ໂອກາດໃຫ້ແສງສະຫວ່າງຫຼັ່ງໄຫຼລົງມາສູ່ໂລກ ຜ່ານການຄົ້ນພົບທາງວິທະຍາສາດ ແລະ ສິລະປະ; ຢ່າງໃດກໍຕາມ, ແມ່ນແຕ່ຜູ້ທີ່ມີສະຕິປັນຍາສູງສຸດ ຖ້າບໍ່ມີພຣະຄຳຂອງພຣະເຈົ້ານຳພາໃນການຄົ້ນ ຄວ້າແລ້ວ ພວກເຂົາກໍຈະສັບສົນເມື່ອພະຍາຍາມເຂົ້າໃຈຄວາມສຳພັນລະຫວ່າງວິທະຍາສາດກັບພຣະ-ຄຳພີ. *{GC 522.2}*

ຄວາມຮູ້ຂອງມະນຸດບໍ່ວ່າຈະເປັນເລື່ອງທາງວິທະຍາສາດ ຫຼື ເລື່ອງຝ່າຍຈິດວິນຍານ ລ້ວນແຕ່ ບໍ່ສົມບູນ. ດ້ວຍເຫດນີ້, ຫຼາຍຄົນຈຶ່ງບໍ່ສາມາດເຊື່ອມໂຍງຄວາມເຂົ້າໃຈດ້ານວິທະຍາສາດເຂົ້າກັບຂໍ້ ຄວາມໃນພຣະຄຳພີ. ຫຼາຍຄົນຮັບເອົາແນວຄິດ ແລະ ທິດສະດີທີ່ບໍ່ມີຫຼັກຖານວ່າ ເປັນຂໍ້ເທັດຈິງທາງ ວິທະຍາສາດ; ພວກເຂົາຄິດວ່າ ພຣະຄຳຂອງພຣະເຈົ້າຕ້ອງຖືກທົດສອບໂດຍຄຳສອນທີ່ພວກເຂົາເອີ້ນ ຜິດວ່າເປັນ “ວິຊາຄວາມຮູ້.” (1 ຕີໂມທຽວ 6:20 LCV). ພຣະຜູ້ສ້າງ ແລະ ພຣະຣາຊກິດຂອງ ພຣະອົງ ເກີນຄວາມເຂົ້າໃຈຂອງພວກເຂົາ, ເມື່ອພວກເຂົາບໍ່ສາມາດອະທິບາຍເລື່ອງໃນພຣະຄຳພີດ້ວຍ ກົດທຳມະຊາດໄດ້, ພວກເຂົາຈຶ່ງຖືວ່າປະຫວັດສາດທີ່ບັນທຶກໄວ້ໃນພຣະຄຳພີບໍ່ມີຄວາມໜ້າເຊື່ອຖື. ຜູ້ ທີ່ສົງໄສຄວາມໜ້າເຊື່ອຖືຂອງພຣະຄຳພີເດີມ ແລະ ພຣະຄຳພີໃໝ່ມັກຈະກ້າວໄປອີກຂັ້ນໜຶ່ງ ຄືສົງໄສ ວ່າພຣະເຈົ້າມີຈິງຫຼືບໍ່ ແລະ ຖືວ່າທຳມະຊາດມີອຳນາດເຊິ່ງບໍ່ມີຂອບເຂດຈຳກັດ. ເມື່ອເຊົາເຊື່ອໝັ້ນໃນ ພຣະເຈົ້າແລ້ວ, ພວກເຂົາກໍເໝືອນເຮືອທີ່ບໍ່ມີສະໝໍ ຈຶ່ງລອຍໄປມາຢ່າງບໍ່ຮູ້ທິດທາງ. *{GC 522.3}*

ດັ່ງນັ້ນ, ຫຼາຍຄົນຈຶ່ງຫຼົງຈາກຄວາມເຊື່ອ ແລະ ຖືກມານຫຼອກລວງ. ມະນຸດພະຍາຍາມທີ່ຈະ ສະຫຼາດກວ່າພຣະຜູ້ສ້າງຂອງຕົນ, ປັດຊະຍາຂອງມະນຸດພະຍາຍາມຄົ້ນຫາ ແລະ ອະທິບາຍຄວາມ ເລິກລັບທີ່ຈະບໍ່ຖືກເປີດເຜີຍຕະຫຼອດຊົ່ວນິດນິຣັນດອນ. ຖ້າມະນຸດພຽງແຕ່ຄົ້ນຄວ້າ ແລະ ເຂົ້າໃຈສິ່ງ ທີ່ພຣະເຈົ້າຊົງເປີດເຜີຍກ່ຽວກັບພຣະອົງ ແລະ ພຣະປະສົງຂອງພຣະອົງ, ພວກເຂົາກໍຈະເຫັນພຣະ ຣັດສະໝີອັນຍິ່ງໃຫຍ່ ແລະ ຣິດອຳນາດຂອງພຣະເຢໂຮວາ ເຊິ່ງຈະເຮັດໃຫ້ພວກເຂົາເຫັນວ່າຕົນເອງ ນັ້ນຊ່າງນ້ອຍນິດເຫຼືອເກີນ ແລະ ພວກເຂົາກໍຈະພໍໃຈກັບສິ່ງທີ່ພຣະອົງຊົງເປີດເຜີຍໃຫ້ແກ່ພວກເຂົາກັບ ລູກຫຼານ. *{GC 522.4}*

ເປັນກົນອຸບາຍອັນແຍບຍົນຂອງຊາຕານ ທີ່ຈະເຮັດໃຫ້ຈິດໃຈຂອງມະນຸດໝົກໝົ້ນຢູ່ກັບການຄົ້ນຫາ ແລະ ຄາດເດົາເຖິງສິ່ງທີ່ພຣະເຈົ້າບໍ່ໄດ້ເປີດເຜີຍ ແລະ ບໍ່ປະສົງທີ່ຈະໃຫ້ພວກເຮົາເຂົ້າໃຈ. ດ້ວຍເຫດນີ້ ເອງ, ລູຊິເຟີຈຶ່ງເສຍຕຳແໜ່ງຂອງຕົນໃນສະຫວັນ; ມັນບໍ່ພໍໃຈທີ່ພຣະເຈົ້າບໍ່ໄດ້ເປີດເຜີຍຄວາມລັບທັງໝົດ ແຫ່ງພຣະປະສົງຂອງພຣະອົງໃຫ້ມັນຮູ້. ໃນຂະນະດຽວກັນ, ມັນໄດ້ລະເລີຍຕໍ່ສິ່ງທີ່ພຣະອົງເປີດເຜີຍ ກ່ຽວກັບຕຳແໜ່ງໜ້າທີ່ອັນສູງສົ່ງທີ່ມັນໄດ້ຮັບມອບໝາຍ. ມັນໄດ້ປູກຝັງຄວາມບໍ່ພໍໃຈນີ້ໃຫ້ແກ່ພວກ ທູດສະຫວັນທີ່ຢູ່ພາຍໃຕ້ການບັງຄັບບັນຊາຂອງຕົນ ຈົນເປັນເຫດໃຫ້ພວກເຂົາຕົກສູ່ຄວາມບາບ. ບັດນີ້

ມັນພະຍາຍາມປູກຝັງຈິດໃຈຂອງມະນຸດ ດ້ວຍແນວຄິດແບບດຽວກັນ ແລະ ຊັກຈູງພວກເຂົາໃຫ້ລະເລີຍ ຕໍ່ພຣະບັນຍັດທີ່ພຣະເຈົ້າຊົງສັ່ງໄວ້ຢ່າງຈະແຈ້ງ. {GC 523.1}

ປະຕິເສດຄວາມຈິງເພາະວ່າຕ້ອງເສຍສະຫຼະ

ຜູ້ທີ່ບໍ່ຍອມຮັບຄວາມຈິງອັນແຈ່ມແຈ້ງ ແລະ ແຫຼມຄົມຂອງພຣະຄຳພີ ກໍມັກຈະຊອກຫາເລື່ອງ ແຕ່ງທີ່ຟັງມ່ວນຫູ ເພື່ອດັບສຽງຂອງຈິດສຳນຶກຜິດຊອບຂອງຕົນເອງ. ຍິ່ງຫຼັກຄຳສອນບໍ່ຕ້ອງການຄວາມ ເສົ່ຽງທາງຈິດວິນຍານ, ການປະຕິເສດຕົນເອງ ແລະ ການຖ່ອມຕົວລົງຫຼາຍເທົ່າໃດ, ຫຼັກຄຳສອນ ນັ້ນກໍຍິ່ງໄດ້ຮັບການຕ້ອນຮັບຫຼາຍຂຶ້ນເທົ່ານັ້ນ. ຄົນເຫຼົ່ານີ້ຍອມໃຫ້ກິເລດຕັນຫາຄອບງຳສະຕິປັນຍາ ຂອງຕົນ. ພວກເຂົາອວດອ້າງວ່າຕົນສະຫຼາດ ຈຶ່ງບໍ່ຍອມສຶກສາພຣະຄຳພີດ້ວຍຄວາມນອບນ້ອມຖ່ອມ ຕົນ ແລະ ການອະທິຖານຢ່າງຮ້ອນຮົນ ເພື່ອຂໍການຊີ້ນຳຈາກພຣະເຈົ້າ; ສະນັ້ນ, ພວກເຂົາຈຶ່ງບໍ່ມີ ແນວປ້ອງກັນຕົວເອງຈາກການຖືກຫຼອກລວງ. ຊາຕານພ້ອມທີ່ຈະຕອບສະໜອງຄວາມປາຖະໜາຂອງ ຈິດໃຈ ໂດຍການສະເໜີການຫຼອກລວງມາແທນຄວາມຈິງ. ດ້ວຍວິທີນີ້ເອງ, ລະບອບສັນຕະປາປາຈຶ່ງມີ ອຳນາດເໜືອຈິດໃຈຂອງຜູ້ຄົນ. ສ່ວນພວກໂປຣແຕັສຕັງກຳລັງດຳເນີນໄປໃນເສັ້ນທາງດຽວກັນ ດ້ວຍການ ປະຕິເສດຄວາມຈິງ ເພາະບໍ່ຢາກແບກໄມ້ກາງແຂນ. ທຸກຄົນທີ່ປະຖິ້ມພຣະຄຳຂອງພຣະເຈົ້າ ແລ້ວຫັນ ໄປຊອກຫາຄວາມສະດວກສະບາຍ ແລະ ສິ່ງທີ່ຈະເຮັດໃຫ້ຕົນເຂົ້າກັບຊາວໂລກ ກໍຈະຖືກປ່ອຍໄວ້ໃຫ້ຫຼົງ ເຊື່ອຄຳສອນນອກຮີດທີ່ຈະນຳໄປສູ່ຄວາມຕາຍ ແທນທີ່ຈະໄດ້ຮັບສັດຈະທຳຝ່າຍຈິດວິນຍານ. ຄົນທີ່ຕັ້ງໃຈ ປະຕິເສດຄວາມຈິງ ຈະຍອມຮັບຄວາມເທັດໃນທຸກຮູບແບບ. ຜູ້ທີ່ເບິ່ງການຫຼອກລວງຢ່າງໃດຢ່າງໜຶ່ງດ້ວຍ ຄວາມຢ້ານກົວ ກໍຈະຕົກເປັນເຫຍື່ອຂອງການຫຼອກລວງໃນຮູບແບບອື່ນຢ່າງງ່າຍດາຍ. ອັກຄະສາວົກ ໂປໂລໄດ້ກ່າວເຖິງຄົນກຸ່ມໜຶ່ງທີ່ບໍ່ຍອມຮັບ “ຄວາມຈິງ ເຊິ່ງຈະຊ່ວຍພວກເຂົາໃຫ້ພົ້ນ,” ໂດຍກ່າວ ວ່າ: “ດັ່ງນັ້ນ, ພຣະເຈົ້າຈຶ່ງໃຫ້ອິດທິພົນອັນຫຼອກລວງນັ້ນ ເຮັດການຢູ່ພາຍໃນ ເພື່ອໃຫ້ພວກເຂົາ ເຊື່ອຟັງຄວາມບໍ່ຈິງ. ໃນທີ່ສຸດ ທຸກຄົນທີ່ບໍ່ໄດ້ເຊື່ອຄວາມຈິງ ຄືຜູ້ທີ່ເພີດເພີນຢູ່ໃນການຊົ່ວຮ້າຍ ກໍຈະ ຖືກພິພາກສາລົງໂທດ.” (2 ເທສະໂລນີກ 2:10–12). ເມື່ອມີການຕັກເຕືອນເຊັ່ນນີ້ ພວກເຮົາຈຶ່ງຄວນ ລະມັດລະວັງໃນການຮັບເອົາຫຼັກຄຳສອນຕ່າງ ໆ. {GC 523.2}

ຄຳສອນຜິດທີ່ອັນຕະລາຍ

ທ່າມກາງອຸບາຍຫຼອກລວງທີ່ໄດ້ຜົນທີ່ສຸດຂອງຊາຕານ ແມ່ນຄຳສອນຜິດຂອງລັດທິຕິດຕໍ່ກັບວິນຍານ ແລະ ການອັດສະຈັນທີ່ມັນເຮັດເພື່ອສະໜັບສະໜຸນຄວາມເຂົ້າໃຈຜິດໃນເລື່ອງນີ້. ມັນປອມຕົວເປັນ ທູດສະຫວັນ ແລ້ວວາງກັບດັກໄວ້ຢູ່ບ່ອນທີ່ຄົນຄາດບໍ່ເຖິງ. ຖ້າມະນຸດພຽງແຕ່ສຶກສາພຣະຄຳຂອງ ພຣະເຈົ້າດ້ວຍການອະທິຖານຢ່າງຈິງຈັງ ແລະ ຄວາມປາຖະໜາທີ່ຈະເຂົ້າໃຈ, ພວກເຂົາກໍຈະບໍ່ຖືກປະ ໄວ້ໃນຄວາມມືດໃຫ້ຫຼົງເຊື່ອຄຳສອນປອມ; ແຕ່ເມື່ອປະຕິເສດຄວາມຈິງ ພວກເຂົາກໍຕົກເປັນເຫຍື່ອຂອງ ການຫຼອກລວງ. {GC 524.1}

ຄຳສອນຜິດທີ່ອັນຕະລາຍອີກຢ່າງໜຶ່ງ ແມ່ນການປະຕິເສດວ່າພຣະຄຣິສຊົງເປັນພຣະເຈົ້າ; ເຊິ່ງ ຄຳສອນນີ້ອ້າງວ່າ ພຣະອົງບໍ່ໄດ້ມີຢູ່ຈິງກ່ອນທີ່ຈະບັງເກີດເປັນມະນຸດ. ຄົນຈຳນວນຫຼາຍທີ່ອ້າງວ່າເຊື່ອ ໃນພຣະຄຳພີໄດ້ຍອມຮັບທິດສະດີນີ້. ແຕ່ມັນຂັດແຍ້ງໂດຍກົງກັບຄຳກ່າວທີ່ຈະແຈ້ງທີ່ສຸດຂອງພຣະ-ຜູ້ຊ່ວຍໃຫ້ລອດຂອງພວກເຮົາ ກ່ຽວກັບຄວາມສຳພັນລະຫວ່າງພຣະອົງກັບພຣະບິດາ, ພຣະລັກສະນະ ການເປັນພຣະເຈົ້າຂອງພຣະອົງ ແລະ ການທີ່ພຣະອົງຊົງເປັນຢູ່ກ່ອນທີ່ຈະບັງເກີດເປັນມະນຸດ. ການ ຈະຍອມຮັບຄຳສອນນີ້ໄດ້ ຕ້ອງປິດເປືອນພຣະຄຳພີຢ່າງບໍ່ມີເຫດຜົນ. ຄຳສອນນີ້ບໍ່ພຽງແຕ່ພາໃຫ້ຄົນ

ເຂົ້າໃຈແຜນການຊົ່ວໄຖ່ຜິດໄປເທົ່ານັ້ນ ແຕ່ຍັງເຮັດໃຫ້ຄົນບໍ່ແນ່ໃຈວ່າພຣະຄຳພີເປັນການເປີດເຜີຍຈາກພຣະເຈົ້າ. ການທີ່ຄຳສອນນີ້ທຳລາຍຄວາມເຊື່ອໃນພຣະຄຳພີ ບໍ່ພຽງແຕ່ເຮັດໃຫ້ມີຄວາມອັນຕະລາຍຫຼາຍຂຶ້ນ, ແຕ່ຍັງເຮັດໃຫ້ຍາກທີ່ຈະຕໍ່ຕ້ານດ້ວຍ. ບໍ່ມີປະໂຫຍດທີ່ຈະໂຕ້ຖຽງກັບຄົນທີ່ປະຕິເສດຄຳສອນໃນພຣະຄຳພີ ກ່ຽວກັບຄວາມເປັນພຣະເຈົ້າຂອງພຣະຄຣິສ; ດ້ວຍວ່າ, ເຖິງແມ່ນຈະມີຂໍ້ໂຕ້ແຍ້ງທີ່ຊັດເຈນທີ່ສຸດ ກໍບໍ່ສາມາດເຮັດໃຫ້ພວກເຂົາເຊື່ອໄດ້. “ຄົນທີ່ບໍ່ມີພຣະວິນຍານ ກໍບໍ່ສາມາດຍອມຮັບສິ່ງທີ່ມາຈາກພຣະວິນຍານຂອງພຣະເຈົ້າໄດ້ ແຕ່ພວກເຂົາຖືວ່າສິ່ງເຫຼົ່ານີ້ເປັນເລື່ອງໂງ່ ແລະ ພວກເຂົາບໍ່ສາມາດເຂົ້າໃຈສິ່ງເຫຼົ່ານັ້ນ ເພາະວ່າຕ້ອງອາໄສການໄຈ້ແຍກຝ່າຍຈິດວິນຍານ ຈຶ່ງຈະເຂົ້າໃຈສິ່ງເຫຼົ່ານັ້ນໄດ້.” (1 ໂກຣິນໂທ 2:14 LCV). ຜູ້ທີ່ມີຄວາມເຊື່ອຜິດໃນເລື່ອງນີ້ ບໍ່ສາມາດເຂົ້າໃຈກ່ຽວກັບພຣະລັກສະນະ ຫຼື ພາລະກິດຂອງພຣະຄຣິສໄດ້ຢ່າງຖືກຕ້ອງ ຫຼື ແຜນການອັນຍິ່ງໃຫຍ່ຂອງພຣະເຈົ້າ ສຳລັບການໄຖ່ມະນຸດໃຫ້ລອດພົ້ນ. *{GC 524.2}*

ຍັງມີຄວາມເຊື່ອຜິດອີກຢ່າງໜຶ່ງທີ່ແອບແຝງເຂົ້າມາ ເຊິ່ງເປັນສິ່ງທີ່ອັນຕະລາຍ ແລະ ກຳລັງແຜ່ຂະຫຍາຍຢ່າງໄວວາ ຄືຄວາມເຊື່ອທີ່ວ່າຊາຕານບໍ່ມີຕົວຕົນ. ຄວາມເຊື່ອນີ້ອ້າງວ່າ ເມື່ອພຣະຄຳພີກ່າວເຖິງຊາຕານກໍພຽງແຕ່ໝາຍເຖິງຄວາມຄິດ ແລະ ຄວາມປາຖະໜາທີ່ຊົ່ວຮ້າຍຂອງມະນຸດເທົ່ານັ້ນ. *{GC 524.3}*

ນັກເທດຫຼາຍຄົນທີ່ໄດ້ຮັບຄວາມນິຍົມຊົມຊອບຈາກປະຊາຊົນໄດ້ສອນຜິດວ່າ ການສະເດັດມາຄັ້ງທີສອງຂອງພຣະຄຣິສ ເປັນການສະເດັດມາຫາແຕ່ລະຄົນເມື່ອເຂົາເສຍຊີວິດ. ຄຳສອນນີ້ ເປັນອຸບາຍທີ່ຈະເຮັດໃຫ້ຄົນບໍ່ໃສ່ໃຈ ກັບການສະເດັດມາຈິງຂອງພຣະອົງໃນເມກແຫ່ງຟ້າສະຫວັນ. ຫຼາຍປີມາແລ້ວທີ່ຊາຕານກ່າວສະເໜີວ່າ “ເບິ່ງແມ...ເພິ່ນຢູ່ທີ່ນີ້ໃນຫ້ອງດ້ານໃນ.” (ມັດທາຍ 24:23–26 LCV). ຫຼາຍຄົນໄດ້ສູນເສຍຊີວິດນິຣັນ ເພາະຮັບເຊື່ອຄຳຫຼອກລວງນີ້. *{GC 525.1}*

ນອກຈາກນັ້ນ, ສະຕິປັນຍາຂອງຊາວໂລກສອນວ່າ ການອະທິຖານເປັນສິ່ງທີ່ບໍ່ຈຳເປັນ. ນັກວິທະຍາສາດອ້າງວ່າ ບໍ່ມີການຕອບຄຳອະທິຖານຢ່າງແທ້ຈິງ ເພາະການຕອບຄຳອະທິຖານຈະເປັນການລະເມີດກົດທຳມະຊາດ ເປັນການອັດສະຈັນ ແລະ ການອັດສະຈັນບໍ່ມີຈິງ. ພວກເຂົາກ່າວວ່າ ຈັກກະວານຖືກຂັບເຄື່ອນໂດຍກົດທຳມະຊາດທີ່ຕາຍຕົວ ແລະ ພຣະເຈົ້າເອງກໍບໍ່ສາມາດເຮັດສິ່ງໃດທີ່ຂັດຕໍ່ກົດເຫຼົ່ານີ້ໄດ້. ແນວຄິດດັ່ງກ່າວກໍເທົ່າກັບເປັນການສອນວ່າ ພຣະເຈົ້າຖືກຜູກມັດໄວ້ດ້ວຍກົດຂອງພຣະອົງເອງ ຄືກັບວ່າກົດທຳມະຊາດຈະກີດກັ້ນເສລີພາບຂອງພຣະເຈົ້າ; ຄຳສອນດັ່ງກ່າວຂັດກັບພຣະຄຳພີ. ພຣະຄຣິສ ແລະ ພວກອັກຄະສາວົກຂອງພຣະອົງໄດ້ເຮັດການອັດສະຈັນບໍ່ແມ່ນບໍ? ພຣະຜູ້ຊ່ວຍໃຫ້ລອດອົງດຽວກັນນີ້ຊົງພຣະຊົນຢູ່ໃນປັດຈຸບັນ ແລະ ຊົງເມດຕາເໝືອນເດີມ; ພຣະອົງຊົງພ້ອມທີ່ຈະຟັງຄຳອະທິຖານທີ່ທູນຂໍດ້ວຍຄວາມເຊື່ອ ເໝືອນດັ່ງເມື່ອພຣະອົງຍັງດຳເນີນຢູ່ທ່າມກາງມະນຸດ. ທຳມະຊາດຮ່ວມມືກັບສິ່ງທີ່ເໜືອທຳມະຊາດ; ມັນເປັນສ່ວນໜຶ່ງໃນແຜນການຂອງພຣະເຈົ້າ ທີ່ຈະປະທານສິ່ງທີ່ພວກເຮົາອະທິຖານຂໍດ້ວຍຄວາມເຊື່ອ ເຊິ່ງພຣະອົງຈະບໍ່ປະທານໃຫ້ຖ້າຫາກພວກເຮົາບໍ່ທູນຂໍ. *{GC 525.2}*

ປະຖິ້ມຄວາມເຊື່ອຍ້ອນສົ່ງໄສພຣະຄຳພີ

ຄຳສອນທີ່ບໍ່ເປັນຄວາມຈິງ ແລະ ແນວຄິດທີ່ແປກປະຫຼາດ ໄດ້ແຜ່ຫຼາຍໃນຄຣິສຕະຈັກຕ່າງໆ ຈົນນັບບໍ່ຖ້ວນ. ການເອົາຫຼັກຄວາມຈິງອັນໃດອັນໜຶ່ງອອກໄປຈາກພຣະຄຳຂອງພຣະເຈົ້າ ຈະນຳມາເຊິ່ງຜົນຮ້າຍອັນໃຫຍ່ຫຼວງທີ່ບໍ່ສາມາດຄາດຄະເນໄດ້. ຄົນສ່ວນຫຼາຍທີ່ກ້າປະຕິເສດຄວາມຈິງກໍບໍ່ໄດ້ຢຸດຢູ່ທີ່ຂໍ້ດຽວເທົ່ານັ້ນ ແຕ່ຈະປະຖິ້ມຫຼັກຄວາມຈິງເທື່ອລະຂໍ້ ຈົນໃນທີ່ສຸດກໍກາຍເປັນຜູ້ທີ່ບໍ່ເຊື່ອໃນພຣະເຈົ້າເລີຍ. *{GC 525.3}*

ຄຳສອນຜິດຂອງຫຼັກສາສະໜາສາດທີ່ໄດ້ຮັບຄວາມນິຍົມຊົມຊອບໃນປັດຈຸບັນ ໄດ້ຊັກນຳຫຼາຍຄົນໃຫ້ເກີດຄວາມສົງໄສ ເຊິ່ງຖ້າບໍ່ແມ່ນຍ້ອນຄຳສອນດັ່ງກ່າວ ພວກເຂົາກໍຄົງໄດ້ເຊື່ອໃນພຣະຄຳພີ. ຄົນເຫຼົ່ານີ້ບໍ່ສາມາດຍອມຮັບຄຳສອນທີ່ຂັດກັບຄວາມຮູ້ສຶກດ້ານຄວາມຍຸຕິທຳ ແລະ ຄວາມເມດຕາກະລຸນາ. ແລ້ວເມື່ອມີການອ້າງວ່າຄຳສອນເຫຼົ່ານີ້ມາຈາກພຣະຄຳພີ ພວກເຂົາຈຶ່ງປະຕິເສດບໍ່ຍອມຮັບພຣະຄຳພີ ວ່າເປັນພຣະຄຳຂອງພຣະເຈົ້າ. *{GC 525.4}*

ນີ້ແມ່ນເປົ້າໝາຍທີ່ຊາຕານຕ້ອງການບັນລຸໃຫ້ໄດ້, ບໍ່ມີສິ່ງໃດທີ່ມັນປາຖະໜາຫຼາຍເທົ່າກັບການທຳລາຍຄວາມເຊື່ອໝັ້ນໃນພຣະເຈົ້າ ແລະ ໃນພຣະຄຳຂອງພຣະອົງ. ຊາຕານຢືນຢູ່ໃນຖານະຫົວໜ້າກອງທັບຜູ້ສົງໄສຈຳນວນມະຫາສານ, ມັນໃຊ້ອຳນາດທັງໝົດທີ່ມັນມີຢູ່ ເພື່ອຫຼອກລວງຜູ້ຄົນໃຫ້ໄປຢູ່ຝ່າຍຂອງມັນ. ການສົງໄສກາຍເປັນແຟຊັ່ນທີ່ຄົນໃນສັງຄົມນິຍົມຊົມເຊີຍ. ມີຄົນຈຳນວນຫຼາຍທີ່ເບິ່ງພຣະຄຳຂອງພຣະເຈົ້າດ້ວຍຄວາມບໍ່ໄວ້ວາງໃຈ ດ້ວຍເຫດຜົນດຽວກັນທີ່ພວກເຂົາບໍ່ໄວ້ວາງໃຈພຣະເຈົ້າ ຜູ້ຊົງດົນໃຈໃຫ້ມີການຂຽນພຣະຄຳພີຂຶ້ນມາ ຄືຍ້ອນພຣະຄຳພີນັ້ນຕັກເຕືອນ ແລະ ກ່າວໂທດເລື່ອງຄວາມບາບ. ຜູ້ທີ່ບໍ່ເຕັມໃຈປະຕິບັດຕາມຂໍ້ກຳນົດໃນພຣະຄຳພີ ກໍພະຍາຍາມລົ້ມລ້າງສິດອຳນາດຂອງພຣະຄຳພີ. ພວກເຂົາອ່ານພຣະຄຳພີ ຫຼື ຮັບຟັງຄຳເທດສະໜາເພື່ອຈັບຜິດເທົ່ານັ້ນ. ມີຫຼາຍຄົນປະຕິເສດພຣະເຈົ້າ ເພື່ອເປັນຂໍ້ແກ້ຕົວ ຫຼື ຂໍ້ອ້າງໃນການບໍ່ປະຕິບັດຕາມພຣະຄຳພີ. ບາງຄົນສະແດງທ່າທີສົງໄສຍ້ອນຄວາມຈອງຫອງ ແລະ ຄວາມກຽດຄ້ານ. ພວກເຂົາຮັກຄວາມສະດວກສະບາຍຫຼາຍເກີນໄປທີ່ຈະສ້າງຜົນງານທີ່ໜ້າຍົກຍ້ອງ, ເຊິ່ງຕ້ອງໃຊ້ຄວາມພະຍາຍາມ ແລະ ການເສຍສະຫຼະ. ດັ່ງນັ້ນ, ພວກເຂົາຈຶ່ງພະຍາຍາມສ້າງຊື່ສຽງວ່າເປັນຄົນສະຫຼາດຫຼັກແຫຼມ ດ້ວຍການວິພາກວິຈານພຣະຄຳພີ. ມີຫຼາຍສິ່ງທີ່ສະໝອງອັນຈຳກັດຂອງມະນຸດບໍ່ສາມາດເຂົ້າໃຈໄດ້ ເພາະບໍ່ໄດ້ຮັບຄວາມສະຫວ່າງຈາກພຣະເຈົ້າ; ສະນັ້ນ, ພວກເຂົາຈຶ່ງພາກັນຈັບຜິດ ແລະ ວິພາກວິຈານ. ຫຼາຍຄົນເຮັດຄືວ່າການບໍ່ຍອມເຊື່ອ ແລະ ການສົງໄສເປັນສິ່ງທີ່ໜ້າຍ້ອງຍໍ. ແຕ່ເບື້ອງຫຼັງທ່າທາງທີ່ສະແດງຄວາມຈິງໃຈກໍຈະພົບວ່າ ຄົນເຫຼົ່ານັ້ນມີຄວາມຈອງຫອງ ແລະ ເຊື່ອໝັ້ນໃນຕົນເອງຫຼາຍຈົນເກີນໄປ. ຫຼາຍຄົນເພີດເພີນກັບການຊອກຫາປະເດັນໃນພຣະຄຳພີທີ່ຈະເຮັດໃຫ້ຄົນອື່ນສັບສົນ; ບາງຄົນຕັ້ງໃຈວິຈານ ແລະ ເຂົ້າຂ້າງຝ່າຍຜິດຍ້ອນມັກການໂຕ້ຖຽງ; ພວກເຂົາບໍ່ຮູ້ວ່າຕົນກຳລັງຕິດກັບດັກຂອງນາຍພານ, ເພາະເມື່ອໄດ້ສະແດງເຫດຜົນທີ່ບໍ່ເຊື່ອອອກມາຢ່າງເປີດເຜີຍແລ້ວ, ພວກເຂົາຮູ້ສຶກວ່າຈຳເປັນຕ້ອງຮັກສາຈຸດຢືນຂອງຕົນເອົາໄວ້. ດັ່ງນັ້ນ, ພວກເຂົາຈຶ່ງຮ່ວມກັບຄົນອະທຳ ແລະ ປິດປະຕູສະຫວັນໃສ່ຕົນເອງ. *{GC 526.1}*

ມີຫຼັກຖານພຽງພໍ

ພຣະເຈົ້າໄດ້ປະທານຫຼັກຖານພຽງພໍໃນພຣະຄຳພີ ເພື່ອສະແດງໃຫ້ເຫັນວ່າພຣະຄຳພີມາຈາກພຣະ-ເຈົ້າ. ຄວາມຈິງອັນຍິ່ງໃຫຍ່ກ່ຽວກັບການໄຖ່ພວກເຮົາໃຫ້ລອດພົ້ນ ຖືກຂຽນໄວ້ຢ່າງຈະແຈ້ງ. ພຣະເຈົ້າຊົງສັນຍາວ່າຈະປະທານພຣະວິນຍານບໍຣິສຸດແກ່ຜູ້ທີ່ສະແຫວງຫາພຣະອົງດ້ວຍໃຈຈິງ. ດັ່ງນັ້ນ, ທຸກຄົນຈຶ່ງສາມາດເຂົ້າໃຈຄວາມຈິງດ້ວຍຕົນເອງ. ພຣະເຈົ້າໄດ້ປະທານຮາກຖານອັນໝັ້ນຄົງໃຫ້ກັບຄວາມເຊື່ອຂອງມະນຸດ. *{GC 526.2}*

ຢ່າງໃດກໍຕາມ, ຄວາມຄິດຂອງມະນຸດມີຂີດຈຳກັດ, ຄົນເຮົາຈຶ່ງບໍ່ສາມາດເຂົ້າໃຈໄດ້ເຖິງແຜນການ ແລະ ພຣະປະສົງຂອງພຣະເຈົ້າຜູ້ຊົງຣິດທານຸພາບສູງສຸດຢ່າງສົມບູນ. ພວກເຮົາບໍ່ສາມາດຄົ້ນພົບພຣະອົງດ້ວຍການຄົ້ນຫາ; ເຮົາບໍ່ຄວນບັງອາດພະຍາຍາມຮູ້ສິ່ງທີ່ພຣະເຈົ້າຊົງປິດບັງໄວ້. ອັກຄະສາວົກໂປໂລໄດ້ຮ້ອງຂຶ້ນວ່າ: “ຂໍ້ຕັດສິນຂອງພຣະອົງນັ້ນ ກໍບໍ່ສາມາດຢັ່ງຮູ້ໄດ້ ແລະ ວິຖີທາງຂອງພຣະອົງກໍ

ເກີນກວ່າຈະຄຶ້ນຫາໄດ້." (ໂຣມ 11:33 LCV). ພວກເຮົາສາມາດເຂົ້າໃຈການກະທຳ ແລະ ເຫດຜົນ ຂອງພຣະເຈົ້າພຽງພໍທີ່ຈະເຫັນຄວາມຮັກ, ພຣະເມດຕາ ແລະ ຣິດອຳນາດອັນບໍ່ມີຂອບເຂດຂອງ ພຣະອົງ. ພຣະບິດາຂອງພວກເຮົາຜູ້ຊົງສະຖິດໃນສະຫວັນ ຊົງຈັດລະບຽບທຸກສິ່ງດ້ວຍພຣະປັນຍາ ແລະ ຄວາມຊອບທຳ. ພວກເຮົາບໍ່ຄວນຮູ້ສຶກບໍ່ພໍໃຈ ຫຼື ຫວາດລະແວງ ແຕ່ຄວນນ້ອມລົງຂາບໄຫວ້ ຕໍ່ພຣະອົງ. ພຣະອົງຈະເປີດເຜີຍພຣະປະສົງຂອງພຣະອົງເທົ່າທີ່ເປັນປະໂຫຍດແກ່ພວກເຮົາ; ສ່ວນທີ່ ເຫຼືອພວກເຮົາຕ້ອງໄວ້ວາງໃຈໃນພຣະຫັດອັນຊົງຣິດເຂັ້ມແຂງ ແລະ ໃນພຣະໄທທີ່ເຕັມລົ້ນໄປດ້ວຍຄວາມ ຮັກ. *{GC 527.1}*

ເຖິງແມ່ນວ່າພຣະເຈົ້າປະທານຫຼັກຖານພຽງພໍສຳລັບຄວາມເຊື່ອ ແຕ່ພຣະອົງຈະບໍ່ປິດກັ້ນທຸກຊ່ອງ ທາງທີ່ມະນຸດຈະຫາຂໍ້ແກ້ຕົວທີ່ຈະບໍ່ເຊື່ອ; ທຸກຄົນທີ່ຊອກຫາຂໍ້ແກ້ຕົວທີ່ຈະສົງໄສກໍຈະພົບຂໍ້ແກ້ຕົວ ນັ້ນ. ບາງຄົນປະຕິເສດທີ່ຈະຍອມຮັບ ແລະ ເຊື່ອຟັງພຣະຄຳຂອງພຣະເຈົ້າ ຈົນກວ່າຂໍ້ຂັດແຍ້ງທັງໝົດ ໄດ້ຮັບຄຳຕອບ ແລະ ບໍ່ມີໂອກາດທີ່ຈະສົງໄສອີກຕໍ່ໄປ; ຄົນແບບນີ້ຈະບໍ່ມີວັນມາເຖິງຄວາມສະຫວ່າງໄດ້ ເລີຍ. *{GC 527.2}*

ຄວາມບໍ່ໄວ້ວາງໃຈໃນພຣະເຈົ້າເປັນທ່າທີຕາມທຳມະຊາດຂອງຄົນທີ່ຍັງບໍ່ໄດ້ກັບໃຈໃໝ່, ເພາະ ຈິດໃຈທີ່ບໍ່ໄດ້ບັງເກີດໃໝ່ກໍເປັນສັດຕູກັບພຣະອົງ. ແຕ່ຄວາມເຊື່ອນັ້ນເປັນຜົນຂອງພຣະວິນຍານບໍຣິສຸດ ແລະ ຈະເຕີບໃຫຍ່ຂຶ້ນກໍຕໍ່ເມື່ອໄດ້ຮັບການທະນຸຖະໜອມເອົາໃຈໃສ່ເທົ່ານັ້ນ. ບໍ່ມີຜູ້ໃດຈະມີຄວາມເຊື່ອ ທີ່ເຂັ້ມແຂງໄດ້ ໂດຍປາສະຈາກຄວາມພະຍາຍາມອັນແນ່ວແນ່. ຄວາມບໍ່ເຊື່ອຈະເພີ່ມທະວີຂຶ້ນເມື່ອ ມີການສົ່ງເສີມ; ແທນທີ່ຈະພິຈາລະນາຫຼັກຖານທີ່ພຣະເຈົ້າປະທານໃຫ້ ເພື່ອຄ້ຳຊູຄວາມເຊື່ອຂອງ ພວກເຂົາ, ມະນຸດພັດປ່ອຍຕົວໃຫ້ສົງໄສ ແລະ ຈັບຜິດ; ພວກເຂົາຈຶ່ງພົບວ່າ ຄວາມສົງໄສຂອງຕົນ ເພີ່ມຂຶ້ນເລື້ອຍໆ. *{GC 527.3}*

ຢ່າງໃດກໍຕາມ, ຜູ້ທີ່ສົງໄສໃນພຣະສັນຍາຂອງພຣະເຈົ້າ ແລະ ບໍ່ໄວ້ວາງໃຈໃນຂໍ້ຄຳພີທີ່ຮັບປະກັນ ເຖິງພຣະຄຸນຂອງພຣະອົງ ກຳກຳລັງເຮັດໃຫ້ພຣະອົງເສຍພຣະກຽດ. ແບບຢ່າງຂອງພວກເຂົາແທນທີ່ ຈະດຶງດູດຄົນອື່ນມາຫາພຣະຄຣິສ ກັບເຮັດໃຫ້ຄົນຫັນໜີຈາກພຣະອົງ. ພວກເຂົາຄືຕົ້ນໄມ້ທີ່ບໍ່ເກີດ ຜົນ, ເປັນຕົ້ນໄມ້ທີ່ແຜ່ງ່າໄມ້ອັນໜາທຶບອອກໄປໄກ, ບັງແສງຕາເວັນຈາກຕົ້ນໄມ້ອື່ນ, ເຮັດໃຫ້ພືດເຫຼົ່ານັ້ນ ຫ່ຽວແຫ້ງ ແລະ ຕາຍໄປພາຍໃຕ້ຮົ່ມເງົາອັນໜາວເຢັນຂອງມັນ; ຜົນງານຊີວິດຂອງຄົນເຫຼົ່ານີ້ຈະກາຍເປັນ ພະຍານກ່າວໂທດພວກເຂົາຕະຫຼອດໄປ. ພວກເຂົາກຳລັງຫວ່ານເມັດພືດແຫ່ງຄວາມສົງໄສ ແລະ ການ ບໍ່ເຊື່ອ ເຊິ່ງຈະໃຫ້ຜົນທີ່ຕ້ອງເກັບກ່ຽວຢ່າງແນ່ນອນ. *{GC 527.4}*

ມີທາງດຽວເທົ່ານັ້ນ ສຳລັບຜູ້ທີ່ປາຖະໜາຢ່າງແທ້ຈິງທີ່ຈະຫຼຸດພົ້ນຈາກຄວາມສົງໄສ; ແທນທີ່ຈະ ຕັ້ງຂໍ້ສົງໄສ ແລະ ຈົ່ມວ່າສິ່ງທີ່ຕົນບໍ່ເຂົ້າໃຈ, ຈົ່ງໃຫ້ພວກເຂົາເອົາໃຈໃສ່ຕໍ່ແສງສະຫວ່າງທີ່ກຳລັງສ່ອງ ມານັ້ນ ແລ້ວຈະໄດ້ຮັບແສງສະຫວ່າງຫຼາຍຂຶ້ນ. ໃຫ້ພວກເຂົາເຮັດທຸກໜ້າທີ່ທີ່ເຂົ້າໃຈ ແລ້ວຄວາມ ເຂົ້າໃຈກໍຈະເພີ່ມຂຶ້ນ, ຈົນໃນທີ່ສຸດພວກເຂົາຈະສາມາດເຂົ້າໃຈ ແລະ ປະຕິບັດໜ້າທີ່ເຊິ່ງເຄີຍສົງໄສ ຢູ່. *{GC 528.1}*

ຫົນທາງສູ່ໄຊຊະນະ

ຊາຕານສາມາດສ້າງຂອງປອມທີ່ຄ້າຍຄືຄວາມຈິງຫຼາຍ ຈົນຫຼອກລວງຄົນທີ່ຢາກຖືກຫຼອກ, ຄືຄົນ ທີ່ພະຍາຍາມຫຼີກລ່ຽງການປະຕິເສດຕົນເອງ ແລະ ການເສຍສະຫຼະຕາມທີ່ຄວາມຈິງຮຽກຮ້ອງ. ແຕ່ ມັນບໍ່ສາມາດຄວບຄຸມຄົນທີ່ປາຖະໜາຢ່າງຈິງໃຈທີ່ຈະຮູ້ຄວາມຈິງ ບໍ່ວ່າຈະຕ້ອງແລກກັບສິ່ງໃດກໍຕາມ. ພຣະຄຣິສຊົງເປັນຄວາມຈິງ ແລະ ເປັນ "ຄວາມສະຫວ່າງແທ້ ທີ່ໃຫ້ຄວາມສະຫວ່າງແກ່ມະນຸດທຸກ

ຄົນ ທີ່ກຳລັງເຂົ້າມາໃນໂລກ.” (ໂຢຮັນ 1:9 LCV). ພຣະເຈົ້າຊົງສົ່ງພຣະວິນຍານແຫ່ງຄວາມຈິງ ມາເພື່ອນຳພາມະນຸດໄປສູ່ຄວາມຈິງທັງປວງ. ພຣະບຸດຂອງພຣະເຈົ້າໄດ້ປະກາດວ່າ: “ຈົ່ງສະແຫວງຫາ ແລ້ວພວກເຈົ້າຈະໄດ້ພົບ.” “ຖ້າຜູ້ໃດເລືອກທີ່ຈະເຮັດຕາມຄວາມປະສົງຂອງພຣະເຈົ້າ ຜູ້ນັ້ນກໍຈະຮູ້ ວ່າ ຄຳສອນຂອງເຮົາມາຈາກພຣະເຈົ້າ.” (ມັດທາຍ 7:7 LCV; ໂຢຮັນ 7:17 LCV). *{GC 528.2}*

ຜູ້ຕິດຕາມພຣະຄຣິສຮູ້ພຽງເລັກນ້ອຍກ່ຽວກັບແຜນການທີ່ຊາຕານ ແລະ ພວກຂອງມັນວາງໄວ້ ເພື່ອຕໍ່ສູ້ພວກເຂົາ. ແຕ່ພຣະອົງຜູ້ປະທັບຢູ່ໃນຟ້າສະຫວັນຈະຊະນະອຸບາຍເຫຼົ່ານີ້ ເພື່ອໃຫ້ສຳເລັດຕາມ ແຜນການອັນເລີກເຊິ່ງຂອງພຣະອົງ. ອົງພຣະຜູ້ເປັນເຈົ້າຍອມໃຫ້ໄພ່ພົນຂອງພຣະອົງຜ່ານການທົດລອງ ອັນຮ້ອນແຮງ ບໍ່ແມ່ນຍ້ອນພຣະອົງພໍພຣະໄທໃນຄວາມທຸກທໍລະມານ ແຕ່ເພາະຂະບວນການນີ້ຈຳເປັນ ຕໍ່ໄຊຊະນະຄັ້ງສຸດທ້າຍຂອງພວກເຂົາ. ພຣະອົງຕ້ອງຍອມໃຫ້ພວກເຂົາຖືກທົດລອງ ເພື່ອໃຫ້ສອດຄ່ອງ ກັບສະຫງ່າຣາສີຂອງພຣະອົງ; ດ້ວຍວ່າ, ຈຸດປະສົງຂອງການຖືກທົດສອບຄວາມເຊື່ອ ແມ່ນເພື່ອກຽມ ພວກເຂົາໃຫ້ສາມາດຕ້ານທານການລໍ້ລວງທັງປວງຂອງຄວາມຊົ່ວໄດ້. *{GC 528.3}*

ບໍ່ວ່າຈະເປັນຄົນຊົ່ວ ຫຼື ພວກຜີມານຊາຕານ ກໍບໍ່ສາມາດຂັດຂວາງວຽກງານຂອງພຣະເຈົ້າ ຫຼື ປິດ ກັ້ນພຣະອົງຈາກໄພ່ພົນຂອງພຣະອົງໄດ້, ຕາບໃດທີ່ຄົນຂອງພຣະອົງສຳນຶກຜິດດ້ວຍຄວາມນອບນ້ອມ ຖ່ອມໃຈ, ສາລະພາບຄວາມຜິດບາບ, ປະຖິ້ມຄວາມບາບຂອງຕົນ ແລະ ຢຶດໝັ້ນໃນພຣະສັນຍາຂອງ ພຣະອົງດ້ວຍຄວາມເຊື່ອ. ການທົດລອງທັງປວງ ແລະ ແຮງຕໍ່ຕ້ານທຸກຢ່າງ ບໍ່ວ່າຈະເປີດເຜີຍ ຫຼື ລີ້ລັບ ກໍສາມາດຕ້ານທານໄດ້ ຕາມທີ່ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: “ບໍ່ແມ່ນໂດຍກຳລັງທາງທະຫານ ຫຼື ໂດຍ ກຳລັງຂອງເຈົ້າເອງ ແຕ່ໂດຍພຣະວິນຍານຂອງເຮົາ.” (ເຊກາຣີຢາ 4:6). *{GC 529.1}*

“ຕາຂອງອົງພຣະຜູ້ເປັນເຈົ້າເຝົ້າເບິ່ງຄົນຊອບທຳ ແລະ ຫູຂອງພຣະອົງຮັບຟັງຄຳອະທິຖານຂອງ ພວກເຂົາ . . . ຖ້າພວກເຈົ້າກະຕືລືລົ້ນໃນການເຮັດດີ ຜູ້ໃດຈະມາເຮັດຮ້າຍພວກເຈົ້າໄດ້?” (1 ເປໂຕ 3:12, 13 LCV). ເມື່ອບາລາອາມຖືກລໍ້ລວງດ້ວຍຄຳສັນຍາເລື່ອງລາງວັນອັນລ້ຳຄ່າ ລາວໄດ້ໃຊ້ ເວດມົນຕໍ່ສູ້ຊາວອິດສະຣາເອນ ແລະ ໄດ້ຖວາຍເຄື່ອງບູຊາແດ່ພຣະເຈົ້າ ເພື່ອຈະສາບແຊ່ງປະຊາກອນ ຂອງພຣະອົງ. ໃນຄາວນັ້ນ, ພຣະວິນຍານຂອງພຣະເຈົ້າໄດ້ຫ້າມບາລາອາມ ບໍ່ໃຫ້ກ່າວຄຳສາບແຊ່ງ ຕາມທີ່ລາວຢາກຈະກ່າວ, ຈົນລາວເຖິງກັບຮ້ອງອອກມາວ່າ: “ເຮົາຈະສາບແຊ່ງຄົນທີ່ພຣະເຈົ້າບໍ່ ສາບແຊ່ງໄດ້ຢ່າງໃດ? ຫຼືປະນາມຄົນທີ່ພຣະເຈົ້າຢາເວບໍ່ໄດ້ປະນາມກໍບໍ່ຫ່ອນໄດ້.” “ຂໍໃຫ້ຂ້າພະເຈົ້າ ສິ້ນຊີບດັ່ງປະຊາຊົນຂອງພຣະເຈົ້າຄົນໜຶ່ງ; ຂໍໃຫ້ຂ້າພະເຈົ້າຕາຍຢ່າງສຸກລົ້ນເໝືອນດັ່ງຄົນຜູ້ໜຶ່ງທີ່ ຊອບທຳ.” ເມື່ອລາວຖວາຍບູຊາອີກ ຜູ້ເຜີຍພຣະທຳຊົ່ວກ່າວວ່າ, “ເບິ່ງແມ ຂ້າພະເຈົ້າໄດ້ຮັບພຣະບັນຊາ ໃຫ້ອວຍພອນ ພຣະອົງໄດ້ຊົງອວຍພອນ ແລະ ຂ້າພະເຈົ້າຈະຢຽກກັບບໍ່ໄດ້; ພຣະອົງໄດ້ທອດພຣະເນດ ວ່າ ບໍ່ມີຄວາມຊົ່ວຊ້າໃນຢາໂຄບ ແລະ ຊົງເຫັນວ່າບໍ່ມີຄວາມຊົ່ວຮ້າຍໃນອິດສະຣາເອນ. ພຣະເຢໂຮວາ ພຣະເຈົ້າຂອງພວກເຂົາຢູ່ກັບພວກເຂົາ ແລະ ສຽງໂຮ່ຮ້ອງຖວາຍພອນພຣະມະຫາກະສັດຢູ່ທ່າມກາງ ພວກເຂົາ.” “ບໍ່ມີເວດມົນຄາຖາໃດຕ້ານ ແລະ ບໍ່ມີວິຊາອາຄົມໃດເລີຍ ເຊິ່ງຈະນຳມາໃຊ້ຕໍ່ສູ້ກັບ ຊົນຊາດອິດສະຣາເອນໄດ້. ບັດນີ້, ປະຊາຊົນທັງຫຼາຍຈະເວົ້າເຖິງຊາດອິດສະຣາເອນວ່າ ເບິ່ງແມ! ສິ່ງ ທີ່ພຣະເຈົ້າກຳລັງໄດ້ເຮັດສຳລັບພວກເຂົາ.” ມີການສ້າງແທ່ນບູຊາເປັນເທື່ອທີສາມ ແລະ ບາລາອາມ ພະຍາຍາມກ່າວຄຳສາບແຊ່ງ ແຕ່ກັບກ່າວຖ້ອຍຄຳທີ່ພຣະວິນຍານບໍຣິສຸດຊົງໃຫ້ກ່າວ ເຖິງແມ່ນວ່າລາວ ຈະບໍ່ເຕັມໃຈກໍຕາມ. ບາລາອາມກ່າວເຖິງຄວາມຈະເລີນຮຸ່ງເຮືອງຂອງປະຊາກອນທີ່ພຣະເຈົ້າຊົງເລືອກ ໄວ້ ແລະ ປະນາມຄວາມໂງ່ ແລະ ຄວາມປອງຮ້າຍຂອງສັດຕູຂອງພວກເຂົາ. “ຜູ້ໃດອວຍພອນຊາດ ອິດສະຣາເອນນັ້ນ ຜູ້ນັ້ນຈະໄດ້ຮັບຄຳອວຍພອນຄືນ ແລະ ຜູ້ໃດສາບແຊ່ງຊາດອິດສະຣາເອນ ຜູ້ນັ້ນ

ຈະໄດ້ຖືກສາບແຊ່ງຕອບ.” (ຈົດເຊັນບັນຊີ 23:8, 10, 20–21 ດັດແປງຈາກສະບັບ TKJV, 23; 24:9). *{GC 529.2}*

ໃນເວລານັ້ນ, ປະຊາຊົນອິດສະຣາເອນມີຄວາມຈົງຮັກພັກດີຕໍ່ພຣະເຈົ້າ; ຕາບໃດທີ່ພວກເຂົາຍັງເຊື່ອຟັງພຣະບັນຍັດຂອງພຣະອົງ ບໍ່ມີອຳນາດໃດຂອງມະນຸດ ຫຼື ຊາຕານທີ່ຈະເອົາຊະນະພວກເຂົາໄດ້. ແຕ່ໃນທີ່ສຸດຄຳສາບແຊ່ງທີ່ບາລາອາມບໍ່ໄດ້ຮັບອະນຸຍາດໃຫ້ກ່າວຕໍ່ປະຊາຊົນຂອງພຣະເຈົ້ານັ້ນກໍໄດ້ຕົກໃສ່ພວກເຂົາ ຍ້ອນວ່າບາລາອາມສາມາດລໍ້ລວງຊາວອິດສະຣາເອນໃຫ້ເຮັດບາບ. ເມື່ອລະເມີດພຣະບັນຍັດຂອງພຣະເຈົ້າ ພວກເຂົາກໍແຍກຕົວອອກຈາກພຣະອົງ ແລະ ຖືກປະໄວ້ໃຫ້ສຳຜັດກັບອຳນາດການທຳລາຍຂອງຊາຕານ. *{GC 529.3}*

ຊາຕານຮູ້ດີວ່າ ແມ່ນແຕ່ຄົນທີ່ອ່ອນແອທີ່ສຸດທີ່ເຂົ້າສະໜິດໃນພຣະຄຣິສ ກໍຍັງເຂັ້ມແຂງກວ່າຊາຕານ ແລະ ບັນດາທູດບໍລິວານຂອງມັນ. ຖ້າຊາຕານປາກົດຕົວຢ່າງເປີດເຜີຍມັນກໍຈະຖືກຕໍ່ຕ້ານ. ດັ່ງນັ້ນ, ມັນຈຶ່ງພະຍາຍາມລໍ້ໃຫ້ທະຫານຂອງພຣະຄຣິສອອກຈາກທີ່ໝັ້ນອັນເຂັ້ມແຂງ, ໃນຂະນະທີ່ມັນດັກຊຸ້ມຢູ່ກັບກອງກຳລັງຂອງມັນ ພ້ອມທີ່ຈະທຳລາຍທຸກຄົນທີ່ລ່ວງລ້ຳເຂົ້າໄປໃນເຂດຂອງມັນ. ພວກເຮົາຈະປອດໄພໄດ້ ດ້ວຍການເພິ່ງພາພຣະເຈົ້າດ້ວຍຄວາມນອບນ້ອມຖ່ອມຕົນ ແລະ ເຊື່ອຟັງພຣະບັນຍັດທຸກຂໍ້ຂອງພຣະອົງເທົ່ານັ້ນ. *{GC 530.1}*

ບໍ່ມີໃຜປອດໄພໄດ້ແມ່ນແຕ່ໜຶ່ງວັນ ຫຼື ໜຶ່ງຊົ່ວໂມງ ຖ້າຂາດການອະທິຖານ. ພວກເຮົາຄວນອ້ອນວອນຂໍສະຕິປັນຍາຈາກພຣະເຈົ້າ ເພື່ອຈະເຂົ້າໃຈພຣະຄຳຂອງພຣະອົງເປັນພິເສດ. ພຣະຄຳພີໄດ້ເປີດເຜີຍອຸບາຍຕ່າງໆຂອງຊາຕານ ແລະ ວິທີທີ່ຈະຕ້ານທານມັນໄດ້. ຊາຕານຊຳນານໃນການອ້າງພຣະຄຳພີ; ມັນຕີຄວາມໝາຍຂໍ້ພຣະຄຳ ໂດຍຫວັງວ່າຈະເຮັດໃຫ້ພວກເຮົາສະດຸດລົ້ມ. ພວກເຮົາຄວນສຶກສາພຣະຄຳພີດ້ວຍຄວາມຖ່ອມໃຈ ໂດຍບໍ່ລືມວ່າພວກເຮົາຕ້ອງການເພິ່ງພາພຣະເຈົ້າຢູ່ສະເໝີ. ໃນຂະນະທີ່ພວກເຮົາຕ້ອງລະວັງອຸບາຍຂອງຊາຕານຢູ່ຕະຫຼອດເວລາ, ພວກເຮົາຄວນອະທິຖານດ້ວຍຄວາມເຊື່ອຢ່າງບໍ່ຢຸດບໍ່ເຊົາວ່າ: “ຂໍຢ່ານຳພວກຂ້ານ້ອຍເຂົ້າໄປໃນການທົດລອງ.” (ມັດທາຍ 6:13 LCV). *{GC 530.2}*

33

ຄວາມຈິງເລື່ອງຄວາມຕາຍ

ການລໍ້ລວງຄັ້ງທຳອິດ

ຕັ້ງແຕ່ມີມະນຸດຢູ່ໃນໂລກ, ຊາຕານໄດ້ເລີ່ມດຳເນີນວຽກງານຂອງມັນ ເພື່ອຫຼອກລວງພວກເຂົາ. ຫຼັງຈາກຍຸຍົງສົ່ງເສີມໃຫ້ມີການກະບົດໃນສະຫວັນ, ຊາຕານກໍປາຖະໜາທີ່ຈະຊັກນຳຊາວໂລກ ໃຫ້ມາຮ່ວມກັບມັນໃນການຕໍ່ສູ້ກັບການປົກຄອງຂອງພຣະເຈົ້າ. ອາດາມກັບເອວາເຄີຍມີຄວາມສຸກຢ່າງສົມບູນ ດ້ວຍການປະຕິບັດຕາມພຣະບັນຍັດຂອງພຣະເຈົ້າ. ຄວາມຈິງນີ້ກາຍເປັນຂໍ້ໂຕ້ແຍ້ງຄຳກ່າວຫາ ທີ່ຊາຕານອ້າງໃນສະຫວັນວ່າ ພຣະບັນຍັດຂອງພຣະເຈົ້າເຄັ່ງຄັດເກີນໄປ ແລະ ຂັດຕໍ່ຄວາມສຸກ ຂອງຜູ້ທີ່ພຣະອົງຊົງສ້າງ. ນອກຈາກນັ້ນ, ຊາຕານກໍອິດສາເມື່ອມັນເຫັນບ້ານອັນສວຍງາມທີ່ຖືກ ຈັດຕຽມໄວ້ໃຫ້ກັບສາມີພັນລະຍາຜູ້ບໍຣິສຸດຄູ່ນີ້. ມັນຈຶ່ງຕັດສິນໃຈທີ່ຈະຍົວະພວກເຂົາໃຫ້ຫຼົງຜິດ ເພື່ອ ວ່າເມື່ອແຍກພວກເຂົາອອກຈາກພຣະເຈົ້າ ແລະ ນຳມາຢູ່ພາຍໃຕ້ອຳນາດຂອງມັນແລ້ວ ມັນຈະ ສາມາດຄອບຄອງແຜ່ນດິນໂລກ ແລະ ສະຖາປະນາອານາຈັກຂອງມັນຂຶ້ນ ເພື່ອຕໍ່ຕ້ານພຣະເຈົ້າຜູ້ ສູງສຸດ. *{GC 531.1}*

ຖ້າຫາກວ່າຊາຕານໄດ້ສະແດງຕົວຕົນທີ່ແທ້ຈິງອອກມາ ອາດາມກັບເອວາກໍຄົງຈະຕໍ່ຕ້ານມັນ ທັນທີ ເນື່ອງຈາກພວກເຂົາໄດ້ຮັບການເຕືອນແລ້ວກ່ຽວກັບສັດຕູທີ່ອັນຕະລາຍຜູ້ນີ້. ດ້ວຍເຫດນີ້, ຊາຕານ ຈຶ່ງເຄື່ອນໄຫວຢ່າງລັບໆ ໂດຍປິດບັງຈຸດປະສົງຂອງມັນໄວ້ ເພື່ອຈະບັນລຸເປົ້າໝາຍໄດ້ງ່າຍຂຶ້ນ. ໃນ ເວລານັ້ນ, ງູເປັນສັດທີ່ມີຮູບຮ່າງໜ້າດຶງດູດ; ມັນຈຶ່ງໃຊ້ງູເປັນສື່ ແລ້ວເວົ້າກັບເອວາວ່າ: “ແມ່ນແທ້ບໍ ທີ່ ພຣະເຈົ້າຫ້າມເຈົ້າ ບໍ່ໃຫ້ກິນໝາກໄມ້ໃດໆໃນສວນນີ້?” (ປະຖົມມະການ 3:1). ຖ້າເອວາຫຼີກລ່ຽງການ ໂຕ້ຖຽງກັບຊາຕານ, ນາງກໍຈະປອດໄພ. ແຕ່ນາງຫຼົມຕົວເຂົ້າໄປສົນທະນາກັບມັນ ຈຶ່ງຕົກເປັນເຫຍື່ອ ການຫຼອກລວງ. ຫຼາຍຄົນຍັງພ່າຍແພ້ໃນລັກສະນະດຽວກັນນີ້; ພວກເຂົາສົງໄສ ແລະ ໂຕ້ຖຽງກ່ຽວກັບ ຂໍ້ກຳນົດຂອງພຣະເຈົ້າ. ພວກເຂົາຍອມຮັບທິດສະດີຂອງມະນຸດທີ່ປິດບັງກົນອຸບາຍຂອງຊາຕານ ແທນທີ່ ຈະເຮັດຕາມພຣະບັນຍັດຂອງພຣະເຈົ້າ. *{GC 531.2}*

“ຜູ້ຍິງຈຶ່ງຕອບງູວ່າ: ‘ໝາກໄມ້ທຸກຕົ້ນຢູ່ໃນສວນນີ້ ພວກເຮົາກິນໄດ້ໝົດ ເວັ້ນໄວ້ແຕ່ໝາກໄມ້ໃນຕົ້ນ ທີ່ຢູ່ກາງສວນ. ພຣະເຈົ້າບອກພວກເຮົາບໍ່ໃຫ້ກິນ ຫຼື ແມ່ນແຕ່ແຕະຕ້ອງມັນເປັນເດັດຂາດ. ຖ້າພວກເຮົາ ຂືນກິນເມື່ອໃດ ພວກເຮົາກໍຈະຕາຍເມື່ອນັ້ນ.’ ແຕ່ງູໄດ້ກ່າວຕໍ່ຜູ້ຍິງວ່າ, ‘ບໍ່ເປັນຄວາມຈິງດອກ ເຈົ້າ ຈະບໍ່ຕາຍ. ພຣະເຈົ້າກ່າວເຊັ່ນນັ້ນເພາະພຣະອົງຮູ້ວ່າ ຖ້າເຈົ້າກິນໝາກໄມ້ນັ້ນເມື່ອໃດ ເຈົ້າກໍຈະເປັນ ເໝືອນພຣະເຈົ້າເມື່ອນັ້ນ, ແລ້ວເຈົ້າກໍຈະຮູ້ຈັກຄວາມດີ ແລະ ຮູ້ຈັກຄວາມຊົ່ວ.’” (ປະຖົມມະການ 3:2–5). ງູນັ້ນກ່າວວ່າ, ພວກເຂົາຈະເປັນເໝືອນພຣະເຈົ້າ, ມີປັນຍາຫຼາຍກວ່າເກົ່າ ແລະ ສາມາດ ມີຊີວິດທີ່ສູງສົ່ງກວ່າເດີມ. ເອວາໄດ້ພ່າຍແພ້ຕໍ່ການລໍ້ລວງ ແລະ ນາງໄດ້ຊັກຈູງອາດາມໃຫ້ເຮັດ

ບາບ. ພວກເຂົາເຊື່ອຄຳເວົ້າຂອງງູວ່າ ພຣະຄຳຂອງພຣະເຈົ້າບໍ່ໜ້າເຊື່ອຖື. ພວກເຂົາບໍ່ໄວ້ວາງໃຈ ພຣະຜູ້ສ້າງຂອງຕົນ ແລະ ຄິດວ່າພຣະອົງກຳລັງຈຳກັດເສລີພາບຂອງພວກເຂົາ. ອາດາມກັບເອວາຄິດ ວ່າຈະໄດ້ຮັບສະຕິປັນຍາອັນເລີດລ້ຳ ແລະ ມີສະພາບທີ່ສູງສົ່ງຍິ່ງຂຶ້ນ ຖ້າພຽງແຕ່ລະເມີດພຣະບັນຍັດ ຂອງພຣະອົງ. {GC 532.1}

ແຕ່ຫຼັງຈາກອາດາມເຮັດບາບແລ້ວ, ເພິ່ນໄດ້ພົບຄວາມໝາຍທີ່ແທ້ຈິງຂອງຖ້ອຍຄຳທີ່ວ່າ “ເຈົ້າກິນ ໃນວັນໃດ ເຈົ້າຈະຕາຍແນ່ໃນວັນນັ້ນ.” (ປະຖົມມະການ 2:17 TKJV). ເພິ່ນໄດ້ພົບວ່າ ຖ້ອຍຄຳ ເຫຼົ່ານີ້ບໍ່ໄດ້ໝາຍເຖິງການເຂົ້າສູ່ສະພາບທີ່ສູງສົ່ງກວ່າເກົ່າຕາມທີ່ຊາຕານໄດ້ຊັກຈູງ. ເພາະຖ້າເປັນເຊັ່ນ ນັ້ນ ສະແດງວ່າການລະເມີດກໍເປັນຫົນທາງທີ່ນຳໄປສູ່ສິ່ງທີ່ດີເລີດ ແລະ ຊາຕານກໍຈະກາຍເປັນຜູ້ ອຳນວຍພຣະພອນໃຫ້ແກ່ມະນຸດສະໂລກ. ແຕ່ອາດາມພົບວ່າ ນັ້ນບໍ່ແມ່ນຄວາມໝາຍຂອງພຣະຄຳທີ່ ພຣະເຈົ້າຊົງກ່າວໄວ້. ພຣະເຈົ້າຊົງປະກາດວ່າ ໂທດແຫ່ງຄວາມບາບຂອງອາດາມຄືມະນຸດຈະຕ້ອງກັບ ໄປເປັນດິນ ເພາະມະນຸດຖືກສ້າງມາຈາກດິນ, ໂດຍຊົງກ່າວວ່າ: “ເຈົ້າຖືກສ້າງມາແຕ່ດິນ ເຈົ້າຈະ ຄືນໄປເປັນດິນອີກ.” (ປະຖົມມະການ 3:19). ຄຳເວົ້າຂອງຊາຕານທີ່ວ່າ “ຕາຂອງເຈົ້າຈະສະຫວ່າງ ຂຶ້ນວັນນັ້ນ” (ປະຖົມມະການ 3:5 TKJV) ເປັນຄວາມຈິງໃນແງ່ດຽວເທົ່ານັ້ນຄື ຫຼັງຈາກອາດາມກັບ ເອວາບໍ່ເຊື່ອຟັງພຣະເຈົ້າ ຕາຂອງພວກເຂົາຖືກເປີດໃຫ້ເຫັນຄວາມໂງ່ຂອງຕົນ. ພວກເຂົາໄດ້ຮູ້ຈັກຄວາມ ຊົ່ວ ແລະ ໄດ້ລິ້ມລົດອັນຂົມຂື່ນແຫ່ງການລ່ວງລະເມີດ. {GC 532.2}

ຢູ່ໃຈກາງສວນເອເດນ ມີຕົ້ນໄມ້ແຫ່ງຊີວິດ, ເຊິ່ງຜົນຂອງມັນມີສັບພະຄຸນເປັນຢາອາຍຸວັດທະນະ ໃຫ້ ຊີວິດຍືນຍາວໂດຍບໍ່ຕາຍ. ຖ້າອາດາມພຽງແຕ່ສັດຊື່ຕໍ່ພຣະເຈົ້າ, ເພິ່ນກໍຈະສາມາດກິນໝາກໄມ້ນີ້ ໄດ້ຢ່າງອິດສະຫຼະ ແລະ ຈະມີຊີວິດຕະຫຼອດໄປ. ແຕ່ເມື່ອເພິ່ນເຮັດບາບ, ເພິ່ນຈຶ່ງຖືກຕັດຂາດ ຈາກໝາກໄມ້ແຫ່ງຊີວິດ ແລະ ກາຍສະພາບເປັນຜູ້ທີ່ຕ້ອງຕາຍ. ຖ້ອຍຄຳຂອງພຣະເຈົ້າທີ່ກ່າວ ວ່າ “ເຈົ້າຖືກສ້າງມາແຕ່ດິນ ເຈົ້າຈະຄືນໄປເປັນດິນອີກ” ຊີ້ໃຫ້ເຫັນເຖິງການດັບສູນຂອງຊີວິດຢ່າງ ໝົດສິ້ນ. {GC 532.3}

ພຣະເຈົ້າຊົງສັນຍາວ່າ ຈະມອບຊີວິດອັນບໍ່ຮູ້ຈັກຕາຍໃຫ້ແກ່ມະນຸດ, ແຕ່ພຣະສັນຍານີ້ມີເງື່ອນໄຂທີ່ ວ່າ ມະນຸດຕ້ອງເຊື່ອຟັງພຣະອົງ. ເມື່ອມະນຸດລະເມີດສິ່ງທີ່ພຣະອົງຊົງຫ້າມໄວ້, ພວກເຂົາກໍສູນເສຍຊີວິດ ອະມະຕະນັ້ນໄປ. ອາດາມບໍ່ສາມາດຖ່າຍທອດສິ່ງທີ່ຕົນເອງບໍ່ມີໃຫ້ແກ່ລູກຫຼານຂອງຕົນໄດ້; ຫຼັງຈາກ ມະນຸດສະໂລກຕົກສູ່ຄວາມບາບ, ມີສິ່ງດຽວທີ່ໃຫ້ພວກເຂົາມີຄວາມຫວັງ ນັ້ນຄືການສິ້ນພຣະຊົນຂອງ ພຣະບຸດຂອງພຣະເຈົ້າທີ່ໃຫ້ມະນຸດມີໂອກາດໄດ້ຮັບຊີວິດອັນບໍ່ຮູ້ຈັກຕາຍອີກຄັ້ງ. “ຄວາມຕາຍ . . . ໄດ້ ລາມໄປເຖິງມະນຸດທຸກຄົນ ເພາະວ່າທຸກຄົນໄດ້ເຮັດບາບ.” ແຕ່ພຣະຄຣິສ “ໄດ້ນຳຊີວິດ ແລະ ຄວາມ ເປັນອະມະຕະມາສູ່ຄວາມສະຫວ່າງຜ່ານທາງຂ່າວປະເສີດ.” (ໂຣມ 5:12; 2 ຕີໂມທຽວ 1:10 LCV). ມະນຸດຈະໄດ້ຮັບຄວາມເປັນອະມະຕະໄດ້ ກໍໂດຍຜ່ານພຣະຄຣິສເທົ່ານັ້ນ. ພຣະເຢຊູຊົງກ່າວ ວ່າ: “ຜູ້ໃດທີ່ເຊື່ອໃນພຣະບຸດກໍມີຊີວິດນິຣັນດອນ, ແຕ່ຜູ້ໃດທີ່ບໍ່ຍອມຮັບພຣະບຸດ ກໍຈະບໍ່ໄດ້ຊີວິດ ນິຣັນດອນ.” (ໂຢຮັນ 3:36 LCV). ທຸກຄົນສາມາດໄດ້ຮັບພຣະພອນອັນລ້ຳຄ່ານີ້ ຖ້າພວກເຂົາຍິນດີ ປະຕິບັດຕາມເງື່ອນໄຂ. ທຸກຄົນ “ທີ່ບໍ່ທໍ້ຖອຍໃນການເຮັດຄວາມດີ ຄືຄົນທີ່ສະແຫວງຫາສະຫງ່າຣາສີ, ກຽດຕິຍົດ ແລະ ຊີວິດທີ່ຕາຍບໍ່ເປັນນັ້ນ, ພຣະອົງກໍຈະໃຫ້ຊີວິດນິຣັນດອນແກ່ພວກເຂົາ.” (ໂຣມ 2:7 LCV). {GC 533.1}

ການຫຼອກລວງ

ນີ້ແຕ່ຊາຕານຈອມຫຼອກລວງຜູ້ດຽວເທົ່ານັ້ນທີ່ສັນຍາກັບອາດາມວ່າ ຈະມີຊີວິດໂດຍຜ່ານການບໍ່ເຊື່ອຟັງ. ຄຳປະກາດຂອງງູໃນສວນເອເດນທີ່ເວົ້າກັບເອວາວ່າ “ເຈົ້າຈະບໍ່ຕາຍ” ເປັນການເທດສະໜາຄັ້ງທຳອິດທີ່ສອນວ່າ ຈິດວິນຍານເປັນອະມະຕະ. ເຖິງແມ່ນວ່າຄຳປະກາດນີ້ອີງໃສ່ຄຳອ້າງຂອງຊາຕານເທົ່ານັ້ນ, ແຕ່ກໍຖືກນຳມາປະກອບຄຳເທດສະໜາຕາມຄຣິສຕະຈັກຕ່າງ ໆ ທົ່ວໂລກ ແລະ ຄົນສ່ວນໃຫຍ່ກໍຮັບເອົາມັນຢ່າງງ່າຍດາຍ ເໝືອນກັບທີ່ບັນພະບຸລຸດຄູ່ທຳອິດຂອງພວກເຮົາໄດ້ຮັບນັ້ນ. ຜູ້ເທດສະໜາໄດ້ປ່ຽນພຣະຄຳຂອງພຣະເຈົ້າຈາກ “ຄົນທີ່ເຮັດບາບຈະຕ້ອງຕາຍ” (ເອເຊກຽນ 18:20 THSV) ມາເປັນ ‘ຜູ້ທີ່ເຮັດບາບຈະບໍ່ຕາຍ ແຕ່ມີຊີວິດອັນຕະຫຼອດໄປເປັນນິດ.’ ພວກເຮົາຕ້ອງອັດສະຈັນໃຈໃນຄວາມງົມງວາຍອັນແປກປະຫຼາດນີ້ ທີ່ເຮັດໃຫ້ມະນຸດເຊື່ອຄຳເວົ້າຂອງຊາຕານຢ່າງງ່າຍດາຍ ແຕ່ກັບບໍ່ຍອມເຊື່ອພຣະຄຳຂອງພຣະເຈົ້າ. {GC 533.2}

ຫຼັງຈາກທີ່ມະນຸດເຮັດບາບ, ຖ້າພວກເຂົາໄດ້ຮັບອະນຸຍາດໃຫ້ເຂົ້າຫາຕົ້ນໄມ້ແຫ່ງຊີວິດໄດ້ຢ່າງອິດສະຫຼະ ພວກເຂົາກໍຈະມີຊີວິດຕະຫຼອດໄປ ແລະ ຄວາມບາບກໍຈະກາຍເປັນສິ່ງທີ່ອະມະຕະ. ແຕ່ມີເຄຣຸບ ແລະ ດາບເພີງ “ປ້ອງກັນບໍ່ໃຫ້ເຂົ້າໄປໃກ້ຕົ້ນໄມ້ແຫ່ງຊີວິດນັ້ນ.” (ປະຖົມມະການ 3:24). ບໍ່ມີຜູ້ໃດໃນເຊື້ອສາຍຂອງອາດາມໄດ້ຮັບອະນຸຍາດໃຫ້ຜ່ານດ່ານນັ້ນໄປກິນໝາກໄມ້ທີ່ໃຫ້ຊີວິດ; ສະນັ້ນ, ຈຶ່ງບໍ່ມີຄົນບາບຜູ້ໃດທີ່ເປັນອະມະຕະ. {GC 533.3}

ຫຼັງຈາກມະນຸດຕົກສູ່ຄວາມບາບ, ຊາຕານໄດ້ສັ່ງໃຫ້ພວກທູດຂອງມັນພະຍາຍາມເປັນພິເສດທີ່ຈະປູກຝັງຄວາມເຊື່ອວ່າ ມະນຸດມີຊີວິດອະມະຕະຕາມທຳມະຊາດ. ເມື່ອມະນຸດຫຼົງເຊື່ອຄຳສອນຜິດດັ່ງກ່າວແລ້ວ, ພວກທູດຂອງຊາຕານກໍສືບຕໍ່ຊັກນຳພວກເຂົາໃຫ້ເຂົ້າໃຈຜິດວ່າ ຄົນບາບຈະມີຊີວິດຢູ່ໃນຄວາມທຸກທໍລະມານຕະຫຼອດໄປ. ຈາກນັ້ນ, ເຈົ້າແຫ່ງຄວາມມືດກໍເຮັດວຽກຜ່ານຕົວແທນຂອງມັນ ເພື່ອໃຫ້ມະນຸດເຂົ້າໃຈຜິດວ່າພຣະເຈົ້າເປັນຈອມຜະເດັດການຜູ້ໂຫດຮ້າຍ. ມັນປະກາດວ່າ ພຣະອົງຈະໂຍນທຸກຄົນທີ່ບໍ່ເຮັດໃຫ້ພຣະອົງພໍພຣະໄທລົງນະຣົກ ແລະ ເຮັດໃຫ້ພວກເຂົາໄດ້ຮັບຄວາມໂກດຮ້າຍຂອງພຣະອົງຢູ່ຕະຫຼອດການ. ຊາຕານຕົວະວ່າ ພຣະຜູ້ສ້າງຂອງພວກເຂົາກໍຈະເບິ່ງລົງມາດ້ວຍຄວາມພໍພຣະໄທ ໃນຂະນະທີ່ເຫັນພວກເຂົາກຳລັງທົນທຸກທໍລະມານຢ່າງແສນສາຫັດ ແລະ ດິ້ນທຸລົນທຸລາຍຢູ່ໃນແປວໄຟອັນຕະຫຼອດໄປເປັນນິດ. {GC 534.1}

ດ້ວຍວິທີນີ້, ຊາຕານຈຶ່ງເອົາລັກສະນະຂອງຕົນໄປປ້າຍສີໃສ່ພຣະຜູ້ສ້າງຜູ້ຊົງອວຍພອນແກ່ມະນຸດຊາດ. ຄວາມໂຫດຮ້າຍທາລຸນແມ່ນລັກສະນະຂອງຊາຕານ, ແຕ່ພຣະເຈົ້າຊົງເປັນຄວາມຮັກ ແລະ ທຸກສິ່ງທີ່ພຣະອົງຊົງສ້າງນັ້ນສະອາດບໍຣິສຸດ ແລະ ໜ້າຮັກ ຈົນກະທັ້ງຊາຕານກະບົດ ແລະ ນຳຄວາມບາບເຂົ້າມາ. ຊາຕານເອງເປັນສັດຕູຜູ້ລໍ້ລວງມະນຸດໃຫ້ເຮັດບາບ; ຈາກນັ້ນ, ກໍທຳລາຍພວກເຂົາເມື່ອມັນສາມາດເຮັດໄດ້. ເມື່ອເຫຍື່ອຢູ່ໃນກຳມືຂອງມັນຢ່າງແໜ່ນອນແລ້ວ ມັນກໍດີໃຈກັບຄວາມຈິບຫາຍທີ່ມັນສ້າງຂຶ້ນ. ຖ້າມັນໄດ້ຮັບອະນຸຍາດ, ມັນຈະກວາດຕ້ອນມະນຸດທັງປວງເຂົ້າໄປໃນບ່ວງແຮ້ວຂອງມັນ. ຖ້າບໍ່ແມ່ນຍ້ອນຄວາມຊ່ວຍເຫຼືອຈາກພຣະເຈົ້າຜູ້ຊົງຣິດອຳນາດສູງສຸດແລ້ວ ຈະບໍ່ມີເຊື້ອສາຍຂອງອາດາມລອດພົ້ນໄດ້ແມ່ນແຕ່ຜູ້ດຽວ. {GC 534.2}

ຊາຕານກຳລັງພະຍາຍາມເອົາຊະນະມະນຸດໃນປັດຈຸບັນ ເຊັ່ນດຽວກັນກັບທີ່ມັນໄດ້ເອົາຊະນະບັນພະບຸລຸດຄູ່ທຳອິດຂອງພວກເຮົາ. ມັນເຮັດໃຫ້ຄວາມເຊື່ອໝັ້ນຂອງພວກເຂົາໃນພຣະຜູ້ສ້າງສັ່ນຄອນ ແລະ ນຳພາພວກເຂົາໃຫ້ສົງໄສໃນການປົກຄອງຂອງພຣະເຈົ້າ ພ້ອມດ້ວຍຄວາມຍຸຕິທຳແຫ່ງພຣະບັນຍັດຂອງພຣະອົງ. ຊາຕານກັບພວກຂອງມັນພະຍາຍາມໃຫ້ຄົນເຫັນວ່າພຣະເຈົ້າຊົ່ວຮ້າຍຍິ່ງກວ່າພວກມັນ

ອີກ ເພື່ອມັນຈະໄດ້ອ້າງເຫດຜົນຂອງການເຮັດຊົ່ວ ແລະ ການກະບົດຂອງມັນ. ຊາຕານພະຍາຍາມໂຍນຄວາມໂທດຮ້າຍທາລຸນ ອັນເປັນລັກສະນະຂອງຕົນເອງໄປໃສ່ພຣະບິດາຂອງພວກເຮົາເທິງສະຫວັນ ເພື່ອໃຫ້ຕົນເບິ່ງຄືເປັນຜູ້ບໍຣິສຸດ. ຈອມຫຼອກລວງອ້າງວ່າ ມັນຖືກຂັບໄລ່ອອກຈາກສະຫວັນຢ່າງບໍ່ເປັນທຳ ຍ້ອນວ່າມັນບໍ່ຍອມຂຶ້ນຢູ່ກັບພຣະເຈົ້າ ເພາະມັນຖືວ່າພຣະອົງຊົງປົກຄອງສະຫວັນໂດຍບໍ່ມີຄວາມຍຸຕິທຳ. ມັນຊີ້ໃຫ້ຄົນທັງໂລກເຫັນວ່າ ການຢູ່ໃຕ້ອຳນາດອັນອ່ອນໂຍນຂອງມັນ ດີກວ່າການຕົກເປັນທາດພາຍໃຕ້ກົດອັນເຂັ້ມງວດຂອງພຣະເຢໂຮວາ. ດ້ວຍວິທີນີ້, ມັນຈຶ່ງປະສົບຜົນສຳເລັດໃນການຫຼອກລໍ້ຫຼາຍຄົນ ໃຫ້ປະຖິ້ມຄວາມຈົງຮັກພັກດີຕໍ່ພຣະເຈົ້າ. {GC 534.3}

ຫຼັກຄຳສອນທີ່ວ່າ ຄົນຊົ່ວຮ້າຍທີ່ຕາຍໄປຈະຖືກທໍລະມານດ້ວຍໄຟ ແລະ ມາດກຳມະຖັນໃນຊຸມນະຣົກທີ່ລຸກໄໝ້ຢູ່ຕະຫຼອດໄປເປັນນິດນັ້ນ ຂັດແຍ້ງກັບຄວາມຮູ້ສຶກຂອງຄວາມຮັກ, ຄວາມເມດຕາ ແລະ ຄວາມຍຸຕິທຳຂອງພວກເຮົາຫຼາຍທີ່ສຸດ. ຄວາມເຊື່ອທີ່ວ່າ ຄົນບາບຈະຕ້ອງທົນທຸກທໍລະມານຕະຫຼອດໄປຕາບເທົ່າຊີວິດຂອງພຣະເຈົ້າ ຍ້ອນຄວາມບາບທີ່ກະທຳໃນຊີວິດອັນສັ້ນ ໆ ນັ້ນເປັນເລື່ອງທີ່ໜ້າລັງກຽດຢ່າງຍິ່ງ. ເຖິງຢ່າງໃດກໍຕາມ, ເລື່ອງນີ້ກໍຍັງຖືກສອນຢ່າງກວ້າງຂວາງ ແລະ ຍັງຄົງເປັນສ່ວນໜຶ່ງຂອງຫຼັກຂໍ້ເຊື່ອຂອງຄຣິສຕະຈັກຫຼາຍຄະນະນິກາຍ. ອາຈານຜູ້ຊົງຄວາມຮູ້ທ່ານໜຶ່ງກ່າວວ່າ: “ການເຫັນຄົນອະທຳທົນທຸກທໍລະມານໃນຊຸມນະຣົກ ຈະເພີ່ມຄວາມສຸກຂອງເຫຼົ່າໄພ່ພົນຂອງພຣະເຈົ້າຕະຫຼອດໄປ. ເມື່ອຄົນຊອບທຳໄດ້ເຫັນຄົນອື່ນທີ່ເກີດມາເປັນມະນຸດ ແລະ ມີສະພາບແວດລ້ອມຄືກັນກັບພວກເຂົາ ແຕ່ພັດຖືກຈົມລົງໄປໃນຄວາມທຸກທໍລະມານເຊັ່ນນັ້ນ ໃນຂະນະທີ່ຕົນໄດ້ຮັບການຊົງເລືອກ, ສິ່ງນີ້ຈະເຮັດໃຫ້ພວກເຂົາຮູ້ສຶກເຖິງຄວາມສຸກຂອງຕົນ.” ອາຈານອີກຄົນໜຶ່ງໄດ້ກ່າວວ່າ: “ໃນຂະນະທີ່ຄຳພິພາກສາລົງໂທດກຳລັງຖືກປະຕິບັດຕໍ່ຄົນທີ່ຕ້ອງຮັບຄວາມໂກດຮ້າຍຂອງພຣະເຈົ້າ, ຄວັນແຫ່ງຄວາມທໍລະມານຂອງພວກເຂົາ ຈະລອຍຂຶ້ນຕໍ່ໜ້າຄົນທີ່ໄດ້ຮັບພຣະເມດຕາຕະຫຼອດໄປ. ແທນທີ່ຈະສົ່ງສານເຫັນອົກເຫັນໃຈຄົນທີ່ກຳລັງທົນທຸກເຫຼົ່ານັ້ນ, ພວກເຂົາກໍຈະຮ້ອງຂຶ້ນວ່າ, ‘ອາແມນ, ຮາເລລູຢາ! ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ!’” {GC 535.1}

ຄຳສອນແບບນີ້ຢູ່ໃສໃນພຣະຄຳຂອງພຣະເຈົ້າ? ເປັນໄປໄດ້ບໍ່ວ່າ ຜູ້ທີ່ໄດ້ຮັບຄວາມລອດພົ້ນໃນສະຫວັນ ຈະສູນເສຍຄວາມຮູ້ສຶກເມດຕາສົ່ງສານ ຈົນແມ່ນແຕ່ຄວາມຮູ້ສຶກອັນເປັນພື້ນຖານຂອງມະນຸດກໍບໍ່ເຫຼືອເລີຍ? ສິ່ງເຫຼົ່ານີ້ຈະຖືກປ່ຽນເປັນຄວາມເມີນເສີຍຂອງຄົນໃຈແຂງກະດ້າງ ຫຼື ຄວາມໂຫດຮ້າຍຂອງຄົນປ່າເຖື່ອນຈັ່ງຊັ້ນບໍ? ບໍ່ແມ່ນຢ່າງນັ້ນດອກ, ບໍ່ແມ່ນແນ່ນອນ, ພຣະຄຳຂອງພຣະເຈົ້າບໍ່ໄດ້ສອນແນວນັ້ນ. ຜູ້ທີ່ສະເໜີແນວຄິດໃນຂໍ້ຄວາມທີ່ຍົກມາຂ້າງເທິງນັ້ນອາດເປັນນັກວິຊາການ ແລະ ເປັນຄົນຈິງໃຈ ແຕ່ພວກເຂົາຖືກຫຼອກລວງດ້ວຍກົນອຸບາຍຂອງຊາຕານ. ມັນນຳພາໃຫ້ພວກເຂົາບິດເບືອນຂໍ້ພຣະຄຳພີທີ່ຟັງຍາກ ໂດຍໃຊ້ຖ້ອຍຄຳທີ່ແຝງຄວາມຂົມຂື່ນ ແລະ ຄວາມອາຄາດປອງຮ້າຍ ອັນເປັນລັກສະນະຂອງມັນເອງ ບໍ່ແມ່ນຂອງພຣະຜູ້ສ້າງຂອງພວກເຮົາ. “ອົງພຣະຜູ້ເປັນເຈົ້າ ພຣະເຈົ້າກ່າວວ່າ ເຮົາມີຊີວິດຢູ່ຢ່າງແນ່ແທ້ ເຮົາຈະບໍ່ດີໃຈເມື່ອເຫັນຄົນບາບຜູ້ໜຶ່ງຕາຍໄປ. ເຮົາຈະດີໃຈຫຼາຍກວ່າ ເມື່ອເຫັນລາວເຊົາເຮັດບາບ ແລະ ມີຊີວິດຢູ່. . . ຈົ່ງເຊົາເຮັດການຊົ່ວຮ້າຍທີ່ພວກເຈົ້າກຳລັງເຮັດຢູ່ນັ້ນສາ. ເປັນຫຍັງພວກເຈົ້າຈຶ່ງຢາກຕາຍ?” (ເອເຊກຽນ 33:11). {GC 535.2}

ພຣະເຈົ້າຈະໄດ້ຫຍັງ ຖ້າພວກເຮົາເຊື່ອວ່າພຣະອົງຊົງຍິນດີທີ່ຈະເຫັນການທໍລະມານອັນບໍ່ມີວັນສິ້ນສຸດ ແລະ ຊົງພໍພຣະໄທກັບສຽງຮ້ອງຄວນຄາງ ແລະ ຄຳສາບແຊ່ງຂອງຜູ້ທີ່ພຣະອົງຊົງຂັງໄວ້ໃນແປວໄຟນະຣົກ? ສຽງອັນໜ້າຢ້ານເຫຼົ່ານີ້ຈະເປັນດັ່ງດົນຕີອັນໜ້າຟັງໃນຫູຂອງພຣະເຈົ້າ ຜູ້ຊົງເປັນຄວາມຮັກອັນບໍ່ມີຂອບເຂດຈຳກັດໄດ້ບໍ? ມີຄົນອ້າງວ່າ ການລົງໂທດຄົນຊົ່ວຕະຫຼອດນິຣັນຈະສະແດງໃຫ້ເຫັນວ່າ ພຣະເຈົ້າຊົງກຽດຊັງຄວາມບາບທີ່ທຳລາຍສັນຕິສຸກ ແລະ ຄວາມເປັນລະບຽບ

ຂອງຈັກກະວານຫຼາຍພຽງໃດ. ໂອ້ ຊ່າງເປັນການໝິ່ນປະໝາດທີ່ໜ້າຢ້ານທີ່ສຸດ! ຄຳສອນຂອງພວກເຂົາເໝືອນດັ່ງວ່າ ການທີ່ພຣະເຈົ້າຊົງກຽດຊັງຄວາມບາບ ເປັນເຫດໃຫ້ພຣະອົງຕ້ອງຮັກສາຄວາມບາບເຫຼົ່ານັ້ນໄວ້ຕະຫຼອດໄປ. ຕາມຄຳສອນຂອງນັກສາສະໜາສາດເຫຼົ່ານີ້ ການທໍລະມານທີ່ບໍ່ມີວັນສິ້ນສຸດ ໂດຍປາສະຈາກຄວາມຫວັງໃນພຣະກະລຸນາ ເຮັດໃຫ້ເຫຍື່ອຜູ້ທຸກທໍລະມານເປັນບ້າ ຈົນພວກເຂົາຈະລະບາຍຄວາມແຄ້ນດ້ວຍການສາບແຊ່ງ ແລະ ການໝິ່ນປະໝາດ ເຊິ່ງເທົ່າກັບເປັນການເພີ່ມພູນຄວາມຜິດບາບຂອງພວກເຂົາຂຶ້ນເລື້ອຍໆ. ແຕ່ແທ້ຈິງແລ້ວ ພຣະເຈົ້າບໍ່ໄດ້ຮັບສະໜ່ຳຣາສີເພີ່ມຂຶ້ນ ດ້ວຍການຍອມໃຫ້ຄວາມບາບເພີ່ມທະວີຂຶ້ນຢ່າງຕໍ່ເນື່ອງຕະຫຼອດຊົ່ວນິຣັນ ຕາມທີ່ຄົນທົ່ວໄປເຂົ້າໃຈຜິດ. {GC 536.1}

ຄຳສອນຜິດເລື່ອງນະຣົກ

ສະຕິປັນຍາອັນຈຳກັດຂອງມະນຸດ ບໍ່ສາມາດປະເມີນຄວາມຊົ່ວຮ້າຍທີ່ເກີດຈາກຄຳສອນຜິດເລື່ອງການທໍລະມານຄົນຊົ່ວຕະຫຼອດນິຣັນໄດ້. ຄຳສອນໃນພຣະຄຳພີທີ່ເຕັມໄປດ້ວຍຄວາມຮັກ, ຄວາມດີງາມ ແລະ ຄວາມເມດຕາອັນລົ້ນເຫຼືອ ກັບຖືກເຮັດໃຫ້ມືດມົນດ້ວຍຄວາມງົມງວາຍ ແລະ ຖືກປົກຄຸມດ້ວຍຄວາມຢ້ານກົວ. ເມື່ອພວກເຮົາພິຈາລະນາເຖິງພາບພົດທີ່ຊາຕານປ້າຍສີກ່ຽວກັບພຣະລັກສະນະຂອງພຣະເຈົ້າ, ພວກເຮົາຈະບໍ່ແປກໃຈທີ່ຄົນພາກັນຢ້ານກົວ ແລະ ກຽດຊັງພຣະຜູ້ສ້າງຂອງພວກເຮົາ ຜູ້ຊົງເມດຕາກະລຸນາ. ພາບພົດອັນໜ້າຢ້ານກ່ຽວກັບພຣະເຈົ້າ ໄດ້ແຜ່ກະຈາຍໄປທົ່ວໂລກຈາກຄຳເທດສະໜາໃນເລື່ອງດັ່ງກ່າວ ເຮັດໃຫ້ຄົນນັບພັນນັບລ້ານປະຕິເສດພຣະເຈົ້າ ແລະ ບໍ່ຍອມເຊື່ອໃນພຣະອົງ. {GC 536.2}

ທິດສະດີເລື່ອງການທໍລະມານຄົນບາບຕະຫຼອດນິຣັນເປັນໜຶ່ງໃນຫຼັກຄຳສອນທຸ່ມເທັດ ທີ່ປະກອບຂຶ້ນເປັນເຫຼົ້າແວງແຫ່ງຄວາມໜ້າສະອິດສະອຸ່ນຂອງບາບີໂລນ ທີ່ນາງໃຫ້ທຸກຊົນຊາດດື່ມນັ້ນ. (ເບິ່ງ ພຣະນິມິດ 14:8; 17:2). ເປັນເລື່ອງທີ່ເຂົ້າໃຈຍາກແທ້ໆ ທີ່ບັນດາຜູ້ຮັບໃຊ້ຂອງພຣະຄຣິສໄດ້ຍອມຮັບຄຳສອນຜິດນີ້ ແລະ ນຳໄປເທດສະໜາໃນໂບດ. ພວກເຂົາໄດ້ຮັບທິດສະດີດັ່ງກ່າວມາຈາກຄຣິສຕະຈັກໂຣມ ເຊັ່ນດຽວກັບທີ່ໄດ້ຮັບຄຳສອນເລື່ອງວັນສະບາໂຕປອມ. ເຖິງແມ່ນວ່າ ມັນໄດ້ຖືກສອນໂດຍຄົນດີ ແລະ ຄົນມີຊື່ສຽງກໍຕາມ ແຕ່ຄວາມສະໜ່ຳໆໃນເລື່ອງນີ້ຍັງບໍ່ທັນມາເຖິງພວກເຂົາເໝືອນດັ່ງທີ່ມັນໄດ້ມາເຖິງພວກເຮົາ. ພວກເຂົາຕ້ອງຮັບຜິດຊອບຕໍ່ຄວາມສະໜ່ຳໆທີ່ສ່ອງມາໃນສະໄໝຂອງພວກເຂົາເທົ່ານັ້ນ; ສ່ວນພວກເຮົາຕ້ອງຮັບຜິດຊອບຕໍ່ຄວາມສະໜ່ຳໆທີ່ສ່ອງມາໃນສະໄໝຂອງພວກເຮົາ. ຖ້າພວກເຮົາຫັນໜີຈາກຫຼັກຖານໃນພຣະຄຳຂອງພຣະເຈົ້າ ແລະ ຍອມຮັບຄຳສອນປອມເພາະບັນພະບຸລຸດຂອງພວກເຮົາສອນ, ກໍຈະເທົ່າກັບເປັນການດື່ມເຫຼົ້າອະງຸ່ນແຫ່ງຄວາມໜ້າກຽດຊັງຂອງບາບີໂລນ ແລະ ຈະເປັນເຫດໃຫ້ພວກເຮົາຕ້ອງຕົກຢູ່ພາຍໃຕ້ຄຳຕັດສິນລົງໂທດທີ່ປະກາດຕໍ່ບາບີໂລນ. {GC 536.3}

ຄຳສອນຜິດເລື່ອງມະນຸດທຸກຄົນຈະລອດ

ຫຼາຍຄົນທີ່ກຽດຊັງຫຼັກຄຳສອນເລື່ອງການທໍລະມານຄົນບາບຕະຫຼອດນິຣັນນັ້ນ ກໍໄດ້ຫັນໄປເຊື່ອຄຳສອນຜິດທີ່ກົງກັນຂ້າມ. ພວກເຂົາເຫັນວ່າ ພຣະຄຳພີສອນວ່າພຣະເຈົ້າຊົງເປັນພຣະເຈົ້າແຫ່ງຄວາມຮັກ ແລະ ຄວາມເມດຕາ ແລະບໍ່ສາມາດເຊື່ອວ່າພຣະອົງຈະໂຍນຜູ້ທີ່ພຣະອົງຊົງສ້າງ ເຂົ້າໄປໃນໄຟນະຣົກທີ່ໄໝ້ຢູ່ຕະຫຼອດໄປເປັນນິດ. ແຕ່ເມື່ອເຊື່ອວ່າຈິດວິນຍານເປັນອະມະຕະໂດຍທຳມະຊາດ, ພວກເຂົາຈຶ່ງບໍ່

ເຫັນທາງເລືອກອື່ນ ນອກຈາກຈະສະຫຼຸບວ່າ ມະນຸດທຸກຄົນຈະໄດ້ຮັບຄວາມລອດພົ້ນໃນທີ່ສຸດ. ຫຼາຍ ຄົນຖືວ່າຄຳເຕືອນໃນພຣະຄຳພີເປັນພຽງການຂົ່ມຂູ່ໄວ້ ເພື່ອໃຫ້ຄົນເຊື່ອຟັງເທົ່ານັ້ນ ແລະ ບໍ່ໄດ້ເປັນ ສິ່ງທີ່ຈະເກີດຂຶ້ນຈິງ. ຕາມຄຳສອນນັ້ນ, ຄົນບາບສາມາດດຳລົງຊີວິດເພື່ອຄວາມສຸກສ່ວນຕົວ ໂດຍ ບໍ່ເອົາໃຈໃສ່ຕໍ່ຂໍ້ກຳນົດຂອງພຣະເຈົ້າ ແຕ່ໃນຂະນະດຽວກັນຍັງຫວັງວ່າຈະເປັນທີ່ຍອມຮັບຂອງພຣະອົງ ໃນທີ່ສຸດ. ຫຼັກຄຳສອນແບບນີ້ອ້າງເຖິງພຣະເມດຕາຂອງພຣະເຈົ້າ ແຕ່ມອງຂ້າມຄວາມຍຸຕິທຳຂອງ ພຣະອົງ; ມັນສະໜອງຄວາມປາຖະໜາຂອງເນື້ອໜັງ ແລະ ເຮັດໃຫ້ຄົນອະທຳມີຄວາມກ້າຫານໃນການ ເຮັດຄວາມຊົ່ວຫຼາຍຂຶ້ນ. *{GC 537.1}*

ຜູ້ທີ່ເຊື່ອວ່າ ມະນຸດທຸກຄົນຈະໄດ້ຮັບຄວາມລອດພົ້ນໃນທີ່ສຸດນັ້ນໄດ້ບິດເບືອນພຣະຄຳພີ ເພື່ອ ສະໜັບສະໜູນຄຳສອນຂອງພວກເຂົາທີ່ທຳລາຍຈິດວິນຍານ ເຊິ່ງຈະເຫັນໄດ້ຢ່າງຈະແຈ້ງເມື່ອພິຈາລະນາ ຄຳເວົ້າຂອງພວກເຂົາເອງ. ມີຊາຍໜຸ່ມຄົນທີ່ບໍ່ມີສາສະໜາເສຍຊີວິດທັນທີຍ້ອນອຸບັດຕິເຫດ; ໃນງານ ສົບຂອງລາວ, ອາຈານຜູ້ໜຶ່ງທີ່ເຊື່ອວ່າມະນຸດທຸກຄົນຈະລອດພົ້ນ ໄດ້ເລືອກຂໍ້ພຣະຄຳພີກ່ຽວກັບກະສັດ ດາວິດມາເປັນຫົວຂໍ້ເທດສະໜາວ່າ: “ເພິ່ນໄດ້ຫາຍໂສກເສົ້າໃນເລື່ອງຂອງອຳໂນນ ດ້ວຍເຫັນວ່າລາວໄດ້ ເສຍຊີວິດແລ້ວ.” (2 ຊາມູເອນ 13:39 ແປຈາກສະບັບ KJV). *{GC 537.2}*

ອາຈານຜູ້ນັ້ນກ່າວວ່າ, “ມີຄົນຖາມຂ້າພະເຈົ້າຢູ່ເລື້ອຍໆວ່າ ຂະຕາກຳຂອງຄົນທີ່ຈາກໂລກນີ້ໄປ ໃນ ຂະນະທີ່ຍັງຄາບາບຢູ່ ຈະເປັນແນວໃດ; ບາງຄົນເສຍຊີວິດໃນຂະນະທີ່ເມົາເຫຼົ້າ, ບາງຄົນເສຍຊີວິດ ໂດຍທີ່ຮອຍເປື້ອນອາດຂະຍາກຳຍັງບໍ່ທັນໄດ້ລ້າງອອກຈາກເສື້ອຂອງພວກເຂົາ ຫຼື ເສຍຊີວິດຄືກັບຊາຍ ໜຸ່ມຄົນນີ້ ຜູ້ທີ່ບໍ່ເຄີຍປະກາດຕົວວ່າມີປະສົບການແຫ່ງຄວາມເຊື່ອ ຫຼື ໄດ້ຮັບຄວາມສຸກຈາກການ ນັບຖືສາສະໜາ. ພວກເຮົາພໍໃຈທີ່ຈະຫາຄຳຕອບຈາກໃນພຣະຄຳພີ ເພາະພຣະຄຳພີໃຫ້ຄຳຕອບສຳລັບ ບັນຫາອັນໜ້າຢ້ານກົວນີ້. ອຳໂນນເປັນຄົນບາບຢ່າງຮ້າຍແຮງ, ລາວບໍ່ໄດ້ກັບໃຈໃໝ່ ແລະ ຖືກຂ້າຕາຍ ໃນຂະນະທີ່ເມົາເຫຼົ້າ. ສ່ວນດາວິດກໍເປັນຜູ້ເຜີຍພຣະທຳຂອງພຣະເຈົ້າ; ເພິ່ນຕ້ອງຮູ້ວ່າຫຼັງຈາກອຳໂນນ ຈາກໄປແລ້ວ ລາວຈະເປັນແນວໃດ. ເພິ່ນສະແດງອອກເຖິງຄວາມຮູ້ສຶກແບບໃດ? ‘ດາວິດປະສົງຈະ ໄປຫາອັບຊາໂລມ ເພາະເພິ່ນໄດ້ຫາຍໂສກເສົ້າໃນເລື່ອງຂອງອຳໂນນ ດ້ວຍເຫັນວ່າລາວໄດ້ເສຍຊີວິດ ແລ້ວ.’” (2 ຊາມູເອນ 13:39 ແປຈາກສະບັບ KJV). *{GC 537.3}*

“ແລ້ວພວກເຮົາຄວນສະຫຼຸບແນວໃດຈາກຖ້ອຍຄຳເຫຼົ່ານີ້? ກໍຄືດາວິດບໍ່ເຊື່ອເລື່ອງການທີ່ຄົນບາບຈະ ຕ້ອງຖືກທໍລະມານອັນບໍ່ຈົບສິ້ນ. ພວກເຮົາກໍເຂົ້າໃຈແນວນັ້ນເຊັ່ນກັນ; ຈາກຂໍ້ນີ້ພວກເຮົາຈຶ່ງພົບຂໍ້ໂຕ້ແຍ້ງ ທີ່ໜັກແໜ້ນ ທີ່ສະໜັບສະໜູນແນວຄິດທີ່ໜ້າພໍໃຈກວ່າ, ມີຄວາມສະຫວ່າງກວ່າ ແລະ ມີຄວາມເມດຕາ ກວ່າ ກ່ຽວກັບຄວາມບໍຣິສຸດ ແລະ ສັນຕິສຸກທີ່ມອບມະນຸດທຸກຄົນຈະໄດ້ຮັບໃນທີ່ສຸດ. ດາວິດໄດ້ຮັບການ ປອບປະໂລມໃຈ ເມື່ອເຫັນວ່າລູກຊາຍຂອງເພິ່ນເສຍຊີວິດໄປແລ້ວ. ເປັນຫຍັງຈຶ່ງເປັນແນວນັ້ນ? ເພາະໃນ ຖານະທີ່ເປັນຜູ້ເຜີຍພຣະທຳ ເພິ່ນຈຶ່ງເຫັນລ່ວງໜ້າເຖິງອະນາຄົດອັນຮຸ່ງເຮືອງ ແລະ ເຫັນວ່າລູກຊາຍຈະ ໄດ້ຫຼຸດພົ້ນຈາກການລໍ້ລວງທັງປວງ, ຈະໄດ້ຮັບອິດສະຫຼະຈາກຄວາມເປັນທາດ ແລະ ຄວາມເສື່ອມໂຊມ ຂອງຄວາມບາບ. ຫຼັງຈາກໄດ້ຮັບການຊຳລະໃຫ້ບໍຣິສຸດ ແລະ ຄວາມສະຫວ່າງພຽງພໍແລ້ວ, ລູກຊາຍ ຂອງເພິ່ນຈະໄດ້ເຂົ້າຮ່ວມຊົມຊື່ນຍິນດີກັບກຸ່ມວິນຍານທີ່ຂຶ້ນສະຫວັນ. ມີສິ່ງດຽວທີ່ປອບປະໂລມຈິດໃຈຂອງ ດາວິດ ກໍຄືການທີ່ລູກຊາຍຜູ້ເປັນທີ່ຮັກແພງຂອງເພິ່ນ ໄດ້ຫຼຸດພົ້ນຈາກສະພາບປັດຈຸບັນທີ່ເຕັມໄປດ້ວຍ ຄວາມບາບ ແລະ ຄວາມທຸກທໍລະມານ, ແລະໄດ້ໄປສູ່ບ່ອນທີ່ຈະໄດ້ຮັບການຫົດສົງດ້ວຍພຣະວິນຍານ ບໍຣິສຸດ ເພື່ອໃຫ້ຈິດວິນຍານອັນມືດດຳຂອງລາວໄດ້ເຂົ້າສູ່ຄວາມສະຫວ່າງ. ທີ່ນັ້ນພຣະເຈົ້າຈະຊົງເປີດເຜີຍ ໃຫ້ລາວຮູ້ປັນຍາແຫ່ງສະຫວັນ ແລະ ຄວາມຊົມຊື່ນຍິນດີແຫ່ງຄວາມຮັກນິຣັນ. ດັ່ງນັ້ນ, ລາວຈຶ່ງຈະໄດ້

ຮັບທຳມະຊາດໃໝ່ ອັນບໍຣິສຸດຜຸດຜ່ອງ ເພື່ອຈະໄດ້ພັກຜ່ອນຢ່າງມ່ວນຊື່ນ ແລະ ຢູ່ຮ່ວມຍິນດີກັບຜູ້ອື່ນ ໃນມໍລະດົກແຫ່ງສະຫວັນ." {GC 538.1}

"ຕາມແນວຄິດນີ້, ພວກເຮົາຈຶ່ງເຊື່ອວ່າຄວາມລອດພົ້ນໃນສະຫວັນ ບໍ່ຂຶ້ນກັບສິ່ງໃດທີ່ພວກເຮົາສາມາດ ເຮັດໃນຊີວິດນີ້, ບໍ່ວ່າຈະເປັນການປ່ຽນແປງຈິດໃຈໃນປັດຈຸບັນ, ຄວາມເຊື່ອຖືໃນປັດຈຸບັນ ຫຼື ການປະກາດ ຕົນເປັນຜູ້ຮັບເຊື່ອໃນສາສະໜາໃນປັດຈຸບັນ." {GC 538.2}

ດັ່ງນັ້ນ, ຜູ້ທີ່ອ້າງຕົນເປັນອາຈານສອນພຣະຄຳຂອງພຣະຄຣິສ ນຳນຳເອົາຄຳຂີ້ຕົວະທີ່ງູໄດ້ກ່າວໃນ ສວນເອເດນມາກ່າວອີກຄັ້ງວ່າ: "ເຈົ້າຈະບໍ່ຕາຍແນ່" ແລະ "ເຈົ້າກິນໝາກໄມ້ນັ້ນວັນໃດ ຕາຂອງເຈົ້າຈະ ສະຫວ່າງຂຶ້ນວັນນັ້ນ ແລະ ເຈົ້າຈະເປັນເໝືອນພຣະ." (ປະຖົມມະການ 3:4–5 TKJV). ອາຈານຜູ້ ນັ້ນປະກາດວ່າ ຄົນບາບທີ່ຊົ່ວຮ້າຍທີ່ສຸດ ແມ່ນແຕ່ຄາຕະກອນ, ໂຈນຂີ້ລັກ ແລະ ຄົນຫຼິ້ນຊູ້ ເມື່ອຕາຍ ໄປແລ້ວຈະໄດ້ເຂົ້າສູ່ຄວາມສຸກອັນບໍ່ຮູ້ຈັກຕາຍ. {GC 538.3}

ແລ້ວຜູ້ບິດເບືອນພຣະຄຳຂອງພຣະເຈົ້າຜູ້ນີ້ ໄດ້ຂໍ້ສະຫຼຸບມາຈາກໃສ? ນຳຈາກປະໂຫຍກດຽວ ທີ່ກ່າວ ເຖິງການທີ່ດາວິດຍອມຮັບເຖິງການຊົງນຳຂອງພຣະເຈົ້າ. "ດາວິດປະສົງຈະໄປຫາອັບຊາໂລມ ເພາະເພິ່ນ ໄດ້ຫາຍໂສກເສົ້າໃນເລື່ອງຂອງອຳໂນນ ດ້ວຍເຫັນວ່າ ລາວໄດ້ເສຍຊີວິດແລ້ວ." (2 ຊາມູເອນ 13:39 ແປ ຈາກສະບັບ KJV). ເມື່ອເວລາຜ່ານໄປ ຄວາມໂສກເສົ້າອັນຂົມຂື່ນນັ້ນໄດ້ຈາງລົງ, ຄວາມຄິດຈິດໃຈຂອງ ດາວິດຈຶ່ງປ່ຽນຈາກລູກຊາຍທີ່ຕາຍໄປແລ້ວມາຫາລູກຊາຍທີ່ຍັງມີຊີວິດຢູ່ ຜູ້ທີ່ໄດ້ໜີໄປເພາະຢ້ານວ່າຈະ ຖືກລົງໂທດຕາມກະບວນຄວາມຍຸຕິທຳ ຍ້ອນອາດຂະຍາກຳຂອງຕົນ. ແລ້ວນີ້ຄືຫຼັກຖານທີ່ອາຈານຜູ້ນັ້ນ ໃຊ້ເພື່ອອ້າງວ່າ ອຳໂນນຜູ້ຂີ້ເຫຼົ້າ ແລະ ຂົ່ມຂືນນ້ອງສາວນັ້ນ ເມື່ອຕາຍໄປກໍໄດ້ຖືກນຳໄປຢູ່ສະຫວັນອິນານ ທັນທີ ເພື່ອຈະໄດ້ຮັບການຊຳລະໃຫ້ພ້ອມສຳລັບການຢູ່ຮ່ວມກັບເຫຼົ່າທູດສະຫວັນບໍຣິສຸດ! ແທ້ຈິງແລ້ວ, ນີ້ ແມ່ນນິຍາຍທີ່ສະໜອງຄວາມປາຖະໜາຂອງເນື້ອໜັງ! ນີ້ແມ່ນຄຳສອນຂອງຊາຕານເອງ ແລະ ເປັນ ເລື່ອງທີ່ຊ່ວຍໃຫ້ວຽກງານຂອງມັນສຳເລັດຢ່າງໄດ້ຜົນ. ເມື່ອມີຄຳສອນໃນລັກສະນະເຊັ່ນນີ້ແລ້ວ ມັນບໍ່ໜ້າ ແປກໃຈທີ່ຄວາມຊົ່ວຮ້າຍຈຶ່ງເພີ່ມທະວີຂຶ້ນ. {GC 538.4}

ຄຳເທດສະໜາຂອງອາຈານຜູ້ສອນຜິດຄົນນີ້ ສະແດງໃຫ້ເຫັນເຖິງຄຳສອນເທັດຂອງອາຈານຄົນ ອື່ນອີກຫຼາຍຄົນ. ພວກເຂົາເລືອກເອົາຂໍ້ພຣະຄຳພີສອງສາມຂໍ້ອອກຈາກເນື້ອຄວາມເດີມຂອງມັນ, ເຊິ່ງ ສ່ວນຫຼາຍຖ້າພຽງແຕ່ອ່ານຂໍ້ຄວາມໃຫ້ຄົບຖ້ວນ ກໍຈະເຫັນວ່າຄວາມໝາຍທີ່ແທ້ຈິງນັ້ນ ກົງກັນຂ້ານ ກັບການຕີຄວາມຂອງພວກເຂົາ. ຂໍ້ພຣະຄຳທີ່ຖືກແຍກອອກຈາກເນື້ອຄວາມຂອງມັນກໍຖືກບິດເບືອນ ແລະ ນຳໄປໃຊ້ເປັນຫຼັກຖານພິສູດຄຳສອນທີ່ບໍ່ມີພື້ນຖານໃນພຣະຄຳຂອງພຣະເຈົ້າ. ຂໍ້ພຣະຄຳພີທີ່ອ້າງ ເປັນຫຼັກຖານວ່າອຳໂນນຜູ້ເປັນຂີ້ເຫຼົ້ານັ້ນຢູ່ໃນສະຫວັນ ເປັນພຽງແຕ່ການຄາດເດົາເທົ່ານັ້ນ, ແຕ່ມັນຂັດ ກັບຂໍ້ຄວາມໃນພຣະຄຳພີທີ່ກ່າວຢ່າງແຈ່ມແຈ້ງວ່າ ຄົນຂີ້ເຫຼົ້າຈະບໍ່ໄດ້ຮັບອານາຈັກຂອງພຣະເຈົ້າເປັນ ມໍລະດົກ. (ເບິ່ງ 1 ໂກຣິນໂທ 6:10). ດ້ວຍວິທີນີ້ພວກຄົນທີ່ມັກສົ່ງໄສ, ບໍ່ເຊື່ອ ແລະ ບໍ່ຍອມຮັບ ຄວາມຈິງ ກໍປ່ຽນຄວາມຈິງໃຫ້ເປັນຄວາມເທັດ. ຄົນຈຳນວນຫຼວງຫຼາຍຖືກຫຼອກລວງດ້ວຍຄຳສອນທີ່ ແຍບຍົນຂອງພວກເຂົາ ແລະ ຖືກກ່ອມໃຫ້ຫຼັບໄຫຼ ໂດຍຄິດເອົາເອງວ່າຕົນປອດໄພໃນຂະນະທີ່ປະພຶດ ຕາມເນື້ອໜັງ. {GC 539.1}

ຖ້າມະນຸດມີດວງວິນຍານທີ່ໄປສູ່ສະຫວັນທັນທີເມື່ອຕາຍ, ພວກເຮົາກໍຄົງປາຖະໜາຄວາມຕາຍຫຼາຍ ກວ່າການມີຊີວິດ. ຫຼາຍຄົນເຖິງກັບຄິດສັ້ນຍ້ອນວ່າມີຄວາມເຊື່ອແບບນີ້. ເມື່ອບັນຫາລຸກລາມກະໂຈມ ເຂົ້າມາ ແລະ ຊີວິດເຕັມໄປດ້ວຍຄວາມສັບສົນ ແລະ ຄວາມຜິດຫວັງ, ພວກເຂົາຄິດວ່າ ການດັບຊີວິດ ດ້ວຍຕົນເອງເພື່ອໄປຮັບເອົາຄວາມສຸກໃນໂລກໜ້ານັ້ນເປັນເລື່ອງງ່າຍ. {GC 539.2}

ພຣະເຈົ້າໄດ້ປະທານຫຼັກຖານອັນຈະແຈ້ງໃນພຣະຄຳຂອງພຣະອົງວ່າ ພຣະອົງຈະລົງໂທດຜູ້ທີ່ລະເມີດພຣະບັນຍັດຂອງພຣະອົງ. ສຳລັບຜູ້ທີ່ຫຼອກຕົວເອງວ່າ ພຣະອົງມີພຣະເມດຕາຫຼາຍເກີນໄປທີ່ຈະລົງໂທດຄົນບາບນັ້ນ, ໃຫ້ພຽງແຕ່ເບິ່ງໄປທີ່ໄມ້ກາງແຂນແຫ່ງພູເຂົາຄານວາຣີ. ການສິ້ນພຣະຊົນຂອງພຣະບຸດຜູ້ບໍຣິສຸດຂອງພຣະເຈົ້າເປັນຫຼັກຖານວ່າ “ຄ່າຈ້າງຂອງຄວາມບາບຄືຄວາມຕາຍ.” ທຸກຄັ້ງທີ່ມີການລະເມີດພຣະບັນຍັດຂອງພຣະເຈົ້າ ກໍຈະຕ້ອງໄດ້ຮັບການລົງໂທດຢ່າງເໝາະສົມ. ພຣະຄຣິສຜູ້ບໍ່ມີບາບໄດ້ຍອມກາຍເປັນຄວາມບາບເພື່ອມະນຸດ; ພຣະອົງຊົງແບກຮັບຄວາມຜິດຂອງການລະເມີດ ແລະ ຕ້ອງທົນຕໍ່ການທີ່ພຣະບິດາຊົງຫັນພຣະພັກອອກຈາກພຣະອົງ ຈົນພຣະໄທຂອງພຣະອົງແຕກສະຫຼາຍ ແລະ ພຣະອົງສິ້ນລົມຫາຍໃຈ. ການເສຍສະຫຼະທັງໝົດນີ້ ແມ່ນເພື່ອໄຖ່ຄົນບາບໃຫ້ລອດພົ້ນ. ບໍ່ມີທາງອື່ນທີ່ມະນຸດຈະຫຼຸດພົ້ນຈາກໂທດຂອງຄວາມບາບໄດ້. ທຸກຄົນທີ່ບໍ່ຍອມຮັບເອົາການລຶບລ້າງບາບທີ່ພຣະຄຣິສຈັດຕຽມໄວ້ດ້ວຍລາຄາແພງນີ້ ຈະຕ້ອງແບກຮັບຄວາມຜິດ ແລະ ໂທດຂອງການລະເມີດນັ້ນດ້ວຍຕົວເອງ. *{GC 539.3}*

ຂໍໃຫ້ພວກເຮົາພິຈາລະນາຕໍ່ໄປວ່າ ພຣະຄຳພີສອນແນວໃດກ່ຽວກັບຄົນອະທຳ ແລະ ຄົນທີ່ບໍ່ຍອມກັບໃຈໃໝ່, ເຊິ່ງພວກທີ່ເຊື່ອວ່າມະນຸດທຸກຄົນຈະລອດພົ້ນນັ້ນ ສອນວ່າຄົນອະທຳທີ່ຕາຍແລ້ວກຳລັງມີຄວາມຊົມຊື່ນຍິນດີໃນສະຫວັນ ໃນສະພາບທູດສະຫວັນບໍຣິສຸດ. *{GC 540.1}*

ເງື່ອນໄຂທີ່ກຳນົດໄວ້

“ຜູ້ໃດທີ່ຫິວນ້ຳ ເຮົາຈະໃຫ້ຜູ້ນັ້ນດື່ມນ້ຳແຫ່ງຊີວິດຈາກບໍ່ນ້ຳພຸ ໂດຍບໍ່ຕ້ອງເສຍຄ່າອັນໃດ.” (ພຣະນິມິດ 21:6 LCV). ພຣະສັນຍານີ້ມີໄວ້ສຳລັບຜູ້ທີ່ມີຄວາມຫິວກະຫາຍເທົ່ານັ້ນ; ມີແຕ່ຜູ້ທີ່ຮູ້ສຶກວ່າຕົນຕ້ອງການນ້ຳແຫ່ງຊີວິດ ແລະ ສະແຫວງຫາມັນເຖິງຂັ້ນຍອມສະຫຼະທຸກສິ່ງ ຈຶ່ງຈະໄດ້ຮັບນ້ຳນັ້ນ. “ຜູ້ທີ່ໄດ້ຮັບໄຊຊະນະຈະໄດ້ຮັບທັງໝົດນີ້ເປັນມໍລະດົກ ແລະ ເຮົາຈະເປັນພຣະເຈົ້າຂອງພວກເຂົາ ແລະ ພວກເຂົາຈະເປັນລູກຂອງເຮົາ.” (ພຣະນິມິດ 21:7 LCV). ຂໍ້ນີ້ກໍຍັງມີເງື່ອນໄຂເຊັ່ນກັນ; ຖ້າພວກເຮົາຈະຮັບທຸກສິ່ງເປັນມໍລະດົກ, ກໍຕ້ອງຕ້ານທານການທົດລອງ ແລະ ເອົາຊະນະຄວາມບາບ. *{GC 540.2}*

ພຣະເຈົ້າຊົງກ່າວຜ່ານຜູ້ເຜີຍພຣະທຳເອຊາຢາວ່າ: “ຈົ່ງບອກຄົນຊອບທຳວ່າ ເຂົາທັງຫຼາຍຈະເປັນສຸກ.” “ແຕ່ຄົນຊົ່ວນັ້ນ ໜ້າລະອາຍແທ້ໆ ເຂົາຈະໄດ້ຮັບສິ່ງເລວຮ້າຍ ເພາະສິ່ງທີ່ມືພວກເຂົາໄດ້ເຮັດກັບຄົນອື່ນໄວ້ ມັນຈະຍ້ອນກັບມາຫາພວກເຂົາ” (ເອຊາຢາ 3:10 TKJV, 11 ດັດແປງຈາກສະບັບ THA-ERV). ກະສັດໂຊໂລໂມນກ່າວວ່າ: “ແມ່ນວ່າຄົນບາບເຮັດຊົ່ວຕັ້ງຮ້ອຍຄັ້ງ ແລະ ມີອາຍຸໝັ້ນຂວັນຍືນຢູ່ໄດ້, ເຖິງຢ່າງນັ້ນຂ້າພະເຈົ້າຍັງຮູ້ແນ່ວ່າ ຄວາມດີຈະມີແກ່ເຂົາທັງຫຼາຍທີ່ຢຳເກງພຣະ-ເຈົ້າ ຄືຄົນທີ່ມີຄວາມຢຳເກງຕໍ່ພຣະພັກພຣະອົງ, ແຕ່ວ່າຈະບໍ່ເປັນການດີແກ່ຄົນຊົ່ວຮ້າຍ.” (ປັນຍາຈານ 8:12, 13 ດັດແປງຈາກສະບັບ TKJV). ສ່ວນອາຈານໂປໂລກໍປະກາດວ່າ ຄົນບາບກຳລັງ “ສະສົມຄວາມໂກດຮ້າຍຕໍ່ສູ້ຕົນເອງໄວ້ ສຳລັບວັນແຫ່ງຄວາມໂກດຮ້າຍຂອງພຣະເຈົ້າ ເມື່ອພຣະອົງສະແດງການພິພາກສາອັນຊອບທຳ. ພຣະເຈົ້າ ‘ຈະຕອບແທນແຕ່ລະຄົນຕາມການກະທຳຂອງພວກເຂົາ.’” “ຄວາມທຸກລຳບາກ ແລະ ຄວາມໂສກເສົ້າເສຍໃຈ ຈະເກີດມີແກ່ມະນຸດທຸກຄົນທີ່ເຮັດຊົ່ວ.” (ໂຣມ 2:5, 6, 9 LCV). *{GC 540.3}*

“ຄົນຜິດສິນທຳ, ຄົນບໍ່ບໍຣິສຸດ ຫຼື ຄົນໂລບ, ຄົນເຫຼົ່ານີ້ເປັນຜູ້ຂາບໄຫວ້ຮູບເຄົາລົບ ຈະບໍ່ໄດ້ຮັບມໍລະດົກໃດໆໃນອານາຈັກຂອງພຣະຄຣິສເຈົ້າ ແລະ ຂອງພຣະເຈົ້າ.” (ເອເຟໂຊ 5:5 LCV). “ຈົ່ງພະຍາຍາມທີ່ຈະຢູ່ຢ່າງສະຫງົບສຸກຮ່ວມກັບທຸກຄົນ ແລະ ເປັນຜູ້ບໍຣິສຸດ ເພາະຖ້າປາສະຈາກຄວາມບໍຣິສຸດແລ້ວ ກໍບໍ່ມີຜູ້ໃດຈະໄດ້ເຫັນອົງພຣະຜູ້ເປັນເຈົ້າ.” (ເຮັບເຣີ 12:14 LCV). “ຄົນທັງຫຼາຍທີ່ປະພຶດ

ຕາມພຣະບັນຍັດຂອງພຣະອົງ ກໍເປັນສຸກ ເພື່ອວ່າເຂົາຈະໄດ້ມີສິດໃນຕົ້ນໄມ້ແຫ່ງຊີວິດ ແລະ ເພື່ອເຂົາຈະໄດ້ເຂົ້າໄປໃນເມືອງນັ້ນໂດຍທາງປະຕູ. ດ້ວຍວ່າ, ພາຍນອກນັ້ນມີໝາ, ຄົນໃຊ້ເວດມົນ, ຄົນລ່ວງປະເວນີ, ຄາຕະກອນ, ຄົນໄຫວ້ຮູບເຄົາລົບ, ຄົນໃດທີ່ຮັກ ແລະ ກະທຳການຂີ້ຕົວະ." (ພຣະນິມິດ 22:14, 15 ດັດແປງຈາກສະບັບ TKJV). *{GC 541.1}*

ພຣະເຈົ້າຊົງເປີດເຜີຍພຣະລັກສະນະຂອງພຣະອົງ ແລະ ວິທີທີ່ພຣະອົງຈັດການກັບຄວາມບາບໃຫ້ມະນຸດຮູ້. "ພຣະເຈົ້າຢາເວ, ພຣະເຈົ້າຜູ້ເຕັມດ້ວຍຄວາມເມດຕາ ແລະ ພຣະຄຸນ, ບໍ່ຮ້າຍງ່າຍ, ເຕັມໄປດ້ວຍຄວາມຮັກ ແລະ ຄວາມຊື່ສັດ, ຜູ້ສະແດງຄວາມຮັກໝັ້ນຄົງຕໍ່ຄົນເປັນພັນຊົ່ວອາຍຸຄົນ ແລະ ໃຫ້ອະໄພຄວາມຊົ່ວຮ້າຍ, ການກະບົດ ແລະ ບາບ. ແຕ່ພຣະອົງຈະບໍ່ລະເວັ້ນໂທດຜູ້ທີ່ເຮັດຜິດ." (ອົບພະຍົບ 34:6, 7 LCV). "ພຣະອົງຈະທຳລາຍຜູ້ຊົ່ວຮ້າຍທຸກຄົນຖິ້ມ." "ບັນດາຄົນບາບຈະຖືກທຳລາຍຢ່າງສິ້ນເຊີງ ເຊື້ອສາຍຂອງພວກເຂົາຈະຖືກທຳລາຍໃຫ້ດັບສູນໄປ." (ເພງສັນລະເສີນ 145:20; 37:38). ພຣະເຈົ້າຈະຊົງໃຊ້ຣິດທານຸພາບ ແລະ ສິດອຳນາດແຫ່ງການປົກຄອງຂອງພຣະອົງໃນການປາບປາມການກະບົດ. ເຖິງຢ່າງໃດກໍຕາມ, ການລົງໂທດຢ່າງຍຸຕິທຳນັ້ນ ສອດຄ່ອງກັບພຣະລັກສະນະຂອງພຣະເຈົ້າຢ່າງສົມບູນ ໃນຖານະທີ່ພຣະອົງຊົງເປັນພຣະເຈົ້າຜູ້ຊົງເມດຕາ, ອົດທົນດົນນານ ແລະ ເຕັມດ້ວຍພຣະກະລຸນາ. *{GC 541.2}*

ພຣະເຈົ້າບໍ່ບັງຄັບຄວາມຄິດຈິດໃຈຂອງຜູ້ໃດ; ພຣະອົງບໍ່ພໍພຣະໄທກັບການຮັບໃຊ້ແບບຂ້າທາດ. ພຣະອົງຊົງປາຖະໜາໃຫ້ຜູ້ທີ່ພຣະອົງຊົງສ້າງນັ້ນຮັກພຣະອົງ ເພາະພຣະອົງຊົງສົມຄວນໄດ້ຮັບຄວາມຮັກ. ພຣະອົງຢາກໃຫ້ມະນຸດເຊື່ອຟັງພຣະອົງ ເພາະພວກເຂົາເຂົ້າໃຈໃນພຣະປັນຍາ, ຄວາມຍຸຕິທຳ ແລະ ພຣະຄຸນຄວາມດີຂອງພຣະອົງ. ທຸກຄົນທີ່ເຂົ້າໃຈຄຸນນະສົມບັດເຫຼົ່ານີ້ຢ່າງຖ່ອງແທ້ ຈະຮັກພຣະອົງ ເພາະພວກເຂົາປະທັບໃຈໃນພຣະລັກສະນະຂອງພຣະອົງ. *{GC 541.3}*

ພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາໄດ້ສອນ ແລະ ເປັນແບບຢ່າງ ເຖິງຫຼັກການແຫ່ງຄວາມເມດຕາ ປານີ ແລະ ຄວາມຮັກ. ຫຼັກການເຫຼົ່ານີ້ສະທ້ອນໃຫ້ເຫັນເຖິງພຣະປະສົງ ແລະ ພຣະລັກສະນະຂອງພຣະເຈົ້າ. ພຣະຄຣິສຊົງກ່າວວ່າ ພຣະອົງບໍ່ໄດ້ສອນສິ່ງໃດນອກຈາກສິ່ງທີ່ພຣະອົງໄດ້ຮັບຈາກພຣະບິດາ. ຫຼັກການແຫ່ງການປົກຄອງຂອງພຣະເຈົ້າ ກົມກຽວກັບຄຳສອນຂອງພຣະຜູ້ຊ່ວຍໃຫ້ລອດທີ່ວ່າ "ຈົ່ງຮັກສັດຕູຂອງພວກເຈົ້າ." ພຣະເຈົ້າຊົງພິພາກສາລົງໂທດຄົນຊົ່ວ ເພື່ອປະໂຫຍດຂອງຈັກກະວານ ແລະ ເພື່ອປະໂຫຍດຂອງຜູ້ທີ່ຖືກລົງໂທດນັ້ນດ້ວຍ. ພຣະອົງຊົງປາຖະໜາທີ່ຈະເຮັດໃຫ້ພວກເຂົາມີຄວາມສຸກ ຖ້າພຣະອົງສາມາດເຮັດໄດ້ໂດຍສອດຄ່ອງກັບກົດບັນຍັດແຫ່ງການປົກຄອງ ແລະ ຄວາມຍຸຕິທຳແຫ່ງພຣະລັກສະນະຂອງພຣະອົງ. ພຣະອົງປະທານຫຼັກຖານແຫ່ງຄວາມຮັກໃຫ້ແກ່ພວກເຂົາຢ່າງຫຼວງຫຼາຍ, ທັງໄດ້ປະທານຄວາມຮູ້ກ່ຽວກັບພຣະບັນຍັດ ແລະ ສືບຕໍ່ສະແດງພຣະເມດຕາຕໍ່ພວກເຂົາ. ແຕ່ພວກເຂົາກັບດູໝິ່ນຄວາມຮັກຂອງພຣະອົງ, ລະເມີດພຣະບັນຍັດ ແລະ ປະຕິເສດພຣະເມດຕາຂອງພຣະອົງ. ໃນຂະນະທີ່ໄດ້ຮັບຂອງປະທານຢູ່ເລື້ອຍໆ, ຄົນອະທຳພັດບໍ່ໄດ້ຖວາຍກຽດແດ່ພຣະອົງຜູ້ປະທານມາ. ພວກເຂົາກຽດຊັງພຣະເຈົ້າ, ເພາະຮູ້ວ່າພຣະອົງກຽດຊັງຄວາມບາບຂອງພວກເຂົາ. ພຣະຜູ້ເປັນເຈົ້າຊົງອົດທົນກັບຄວາມດື້ດ້ານຂອງຄົນອະທຳເປັນເວລາດົນນານ, ແຕ່ເວລາຈະມາເຖິງໃນທີ່ສຸດທີ່ຈະຊີ້ຂາດຊະຕາກຳຂອງພວກເຂົາ. ໃນເວລານັ້ນ, ພຣະອົງຈະບໍ່ຜູກມັດລ່າມໂສ້ພວກກະບົດເຫຼົ່ານີ້ໄວ້ກັບພຣະອົງ, ພຣະອົງຈະບໍ່ບັງຄັບພວກເຂົາໃຫ້ເຮັດຕາມພຣະປະສົງຂອງພຣະອົງ. *{GC 541.4}*

ບໍ່ພ້ອມທີ່ຈະເຂົ້າແຜ່ນດິນສະຫວັນ

ຜູ້ທີ່ເລືອກເອົາຊາຕານເປັນຜູ້ນຳໃນຊີວິດ ແລະ ຖືກຄວບຄຸມດ້ວຍອຳນາດຂອງມັນ ກໍບໍ່ມີຄວາມພ້ອມທີ່ຈະເຂົ້າເຝົ້າຕໍ່ພຣະພັກພຣະເຈົ້າ. ຄວາມຫຍິ່ງຈອງຫອງ, ການຫຼອກລວງ, ການຫຼິ້ນຊູ້ ແລະ ຄວາມໂຫດຮ້າຍທາລຸນ ໄດ້ຝັງເລິກຢູ່ໃນອຸປະນິໄສຂອງພວກເຂົາ. ເປັນໄປໄດ້ບໍທີ່ຄົນອະທຳຈະເຂົ້າໄປໃນສະຫວັນ ເພື່ອຢູ່ຕະຫຼອດໄປກັບຜູ້ທີ່ພວກເຂົາເຄີຍດູໝິ່ນກຽດຊັງຢູ່ໃນໂລກ? ຄົນຂີ້ຕົວະບໍ່ມີວັນພໍໃຈກັບຄວາມຈິງ; ຄົນຈອງຫອງ ແລະ ຄົນຫຼົງຕົວເອງ ບໍ່ມີວັນອີ່ມໃຈກັບຄວາມອ່ອນນ້ອມຖ່ອມຕົນ; ຄົນໃຈຊາມບໍ່ມີວັນທີ່ຈະຍອມຮັບຄວາມບໍຣິສຸດ; ຄົນເຫັນແກ່ຕົວບໍ່ສົນໃຈຕໍ່ຄວາມຮັກທີ່ເສຍສະຫຼະ; ສະຫວັນຈະມີຄວາມສຸກໄດ້ແນວໃດສຳລັບຄົນທີ່ໝົກໝົ້ນຢູ່ແຕ່ກັບສິ່ງຂອງຝ່າຍໂລກ ແລະ ຜົນປະໂຫຍດສ່ວນຕົວ? {GC 542.1}

ຖ້າສົມມຸດວ່າ ຜູ້ທີ່ດຳລົງຊີວິດໃນການກະບົດຕໍ່ພຣະເຈົ້າຖືກຮັບໄປຢູ່ສະຫວັນທັນທີ, ພວກເຂົາຈະຢູ່ໄດ້ແນວໃດ? ຈະເປັນໄປໄດ້ບໍທີ່ພວກເຂົາຈະຮ່ວມຮ້ອງເພງສັນລະເສີນກັບຜູ້ຄົນໃນສະຫວັນ ໃນເມື່ອຈິດໃຈຂອງພວກເຂົາກຽດຊັງພຣະເຈົ້າ, ກຽດຊັງຄວາມຈິງ ແລະ ຄວາມບໍຣິສຸດ? ເພາະໃນສະຫວັນເຕັມໄປດ້ວຍຄວາມບໍຣິສຸດສັກສິດ ແລະ ຄວາມສົມບູນແບບ. ທຸກຄົນເຕັມລົ້ນດ້ວຍຄວາມຮັກ, ທຸກໃບໜ້າສະທ້ອນເຖິງຄວາມຊົມຊື່ນຍິນດີ, ມີສຽງດົນຕີອັນໄພເລາະດັງຂຶ້ນ ເພື່ອຖວາຍກຽດແດ່ພຣະເຈົ້າ ແລະ ພຣະເມສານ້ອຍ. ທີ່ນັ້ນມີແສງຈາກພຣະພັກຂອງພຣະອົງຜູ້ປະທັບເທິງພຣະທີ່ນັ່ງສ່ອງລົງມາເທິງຜູ້ທີ່ໄດ້ຮັບການຊົງໄຖ່. ຄົນເຫຼົ່ານັ້ນຈະສາມາດທົນຕໍ່ສະຫງ່າຣາສີຂອງພຣະເຈົ້າ ແລະ ພຣະເມສານ້ອຍໄດ້ບໍ? ບໍ່ໄດ້ຢ່າງແນ່ນອນ! ພຣະເຈົ້າປະທານເວລາຫຼາຍປີໃຫ້ພວກເຂົາ ເພື່ອສ້າງອຸປະນິໄສທີ່ເໝາະສົມກັບສະຫວັນ ແຕ່ພວກເຂົາບໍ່ເຄີຍຝຶກຈິດໃຈໃຫ້ຮັກຄວາມບໍຣິສຸດ ແລະ ບໍ່ເຄີຍຮຽນຮູ້ພາສາແຫ່ງສະຫວັນ; ບັດນີ້ກໍສາຍເກີນໄປແລ້ວ. ພວກເຂົາກະບົດຕໍ່ພຣະເຈົ້າຕະຫຼອດຊົ່ວຊີວິດ ຈົນເຮັດໃຫ້ພວກເຂົາບໍ່ເໝາະສົມກັບສະຫວັນ. ຖ້າຄົນເຫຼົ່ານີ້ໄດ້ສຳຜັດເຖິງຄວາມສະອາດບໍຣິສຸດ ແລະ ຄວາມສະຫງົບສຸກໃນສະຫວັນກໍຄົງຮູ້ສຶກທຸກທໍລະມານໃຈຫຼາຍ. ຣັດສະໝີພາບຂອງພຣະເຈົ້າຈະເປັນດັ່ງໄຟທີ່ເຜົາຜານສຳລັບຄົນອະທຳ; ພວກເຂົາຈະປາຖະໜາຢາກໜີຈາກສະຖານທີ່ອັນບໍຣິສຸດນັ້ນ; ພວກເຂົາຈະຍິນດີຖືກທຳລາຍ ຍ້ອນຢາກຫຼົບລີ້ຈາກພຣະພັກຂອງພຣະອົງຜູ້ສິ້ນພຣະຊົນເພື່ອໄຖ່ບາບຂອງພວກເຂົາ. ບັ້ນປາຍຂອງຄົນອະທຳຖືກກຳນົດດ້ວຍການເລືອກຂອງພວກເຂົາເອງ; ການທີ່ພວກເຂົາຖືກກີດກັນຈາກສະຫວັນກໍເປັນການສະໝັກໃຈຂອງພວກເຂົາ ແລະ ເປັນໄປຕາມຄວາມຍຸຕິທຳ ແລະ ພຣະເມດຕາຂອງພຣະເຈົ້າ. {GC 542.2}

ເຊັ່ນດຽວກັບນ້ຳຖ້ວມໃນສະໄໝຂອງໂນອາ, ໄຟໃນວັນອັນຍິ່ງໃຫຍ່ນັ້ນຈະປະກາດຄຳຕັດສິນຂອງພຣະເຈົ້າວ່າ ຄົນອະທຳບໍ່ສາມາດປົ່ນປົວໄດ້, ຍ້ອນວ່າພວກເຂົາບໍ່ຍອມຈຳນົນຕໍ່ສິດອຳນາດຂອງພຣະ-ເຈົ້າ. ພວກເຂົາໄດ້ເລືອກທາງແຫ່ງການກະບົດ, ແລ້ວເມື່ອຊີວິດສິ້ນສຸດລົງ ກໍສາຍເກີນໄປທີ່ຈະປ່ຽນກະແສຄວາມຄິດໄປໃນທິດທາງກົງກັນຂ້າມ; ມັນສາຍເກີນໄປທີ່ຈະປ່ຽນຈາກການລະເມີດມາສູ່ການເຊື່ອຟັງ, ຈາກຄວາມກຽດຊັງມາສູ່ຄວາມຮັກ. {GC 543.1}

ໃນການໄວ້ຊີວິດກາອິນຜູ້ເປັນຄາຕະກອນນັ້ນ, ພຣະເຈົ້າຊົງສະແດງໃຫ້ໂລກເຫັນຕົວຢ່າງຂອງຜົນທີ່ຈະເກີດຂຶ້ນຈາກການປ່ອຍໃຫ້ຄົນບາບມີຊີວິດຢູ່ ເພື່ອສືບຕໍ່ເສັ້ນທາງແຫ່ງຄວາມຊົ່ວຮ້າຍຢ່າງບໍ່ມີຂອບເຂດ. ຄຳສອນ ແລະ ແບບຢ່າງຂອງກາອິນໄດ້ຊັກນຳລູກຫຼານຂອງລາວຈຳນວນຫຼວງຫຼາຍເຂົ້າສູ່ຄວາມບາບ, ຈົນກະທັ້ງ “ມະນຸດຊົ່ວຮ້າຍຫຼາຍຂຶ້ນ ແລະ ຄວາມຄິດຊົ່ວກໍບັງຄັບຈິດໃຈພວກເຂົາຢູ່ທຸກ

ເວລາ.” “ທຸກຄົນໄດ້ເຮັດຊົ່ວໃນສາຍຕາຂອງພຣະເຈົ້າ ແລະການຂ້າຟັນລັນແທງກັນກໍແຜ່ລາມໄປທົ່ວທຸກ ທີ່ທຸກບ່ອນ.” (ປະຖົມມະການ 6:5, 11). {GC 543.2}

ໃນສະໄໝໂນອາ, ພຣະເຈົ້າຊົງເມດຕາມະນຸດສະໂລກ ໂດຍຊົງທຳລາຍຄົນຊົ່ວຊ້າໃຫ້ໝົດໄປ ແລະ ຕໍ່ ມາກໍຊົງທຳລາຍຊາວເມືອງໂຊໂດມຜູ້ເສື່ອມຊາມນັ້ນດ້ວຍຄວາມເມດຕາເຊັ່ນກັນ. ຊາຕານຫຼອກລວງ ມະນຸດໃຫ້ເຫັນອົກເຫັນໃຈ ແລະ ນິຍົມຊົມເຊີຍຄົນທີ່ເຮັດຊົ່ວ, ດ້ວຍເຫດນີ້, ຄົນຊົ່ວຈຶ່ງຊັກນຳຄົນອື່ນ ໃນການກະບົດຢ່າງຕໍ່ເນື່ອງ. ມັນເປັນແບບນີ້ໃນສະໄໝຂອງກາອິນ ແລະ ໃນສະໄໝໂນອາ; ຕໍ່ມາໃນ ຍຸກຂອງອັບຣາຮາມກັບໂລດກໍເຊັ່ນກັນ ແລະ ມັນກໍເປັນແບບນີ້ໃນຍຸກສະໄໝຂອງພວກເຮົາ. ໃນທີ່ສຸດ ພຣະເຈົ້າຈະຊົງທຳລາຍຜູ້ທີ່ປະຕິເສດພຣະຄຸນຂອງພຣະອົງ ກໍດ້ວຍພຣະເມດຕາທີ່ມີຕໍ່ຊີວິດທັງຫຼາຍໃນ ຈັກກະວານ. {GC 543.3}

ປາຍທາງຖະໜົນສອງເສັ້ນ

“ດ້ວຍວ່າ, ຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ແຕ່ຂອງພຣະຄຸນອັນໂຜດມາແຕ່ ພຣະເຈົ້າ ກໍຄືຊີວິດນິຣັນດອນ ໃນພຣະເຢຊູຄຣິສເຈົ້າ ອົງພຣະຜູ້ເປັນເຈົ້າຂອງພວກເຮົາ.” (ໂຣມ 6:23). ຊີວິດເປັນມໍລະດົກຂອງຄົນຊອບທຳ ໃນຂະນະທີ່ຄວາມຕາຍກໍເປັນມໍລະດົກຂອງຄົນຊົ່ວ. ໂມເຊປະກາດ ຕໍ່ຊາວອິດສະຣາເອນວ່າ: “ວັນນີ້ ຂ້າພະເຈົ້າຈະໃຫ້ພວກເຈົ້າເລືອກເອົາ ລະຫວ່າງຊີວິດ ແລະ ຄວາມ ຈະເລີນ ກັບຄວາມຕາຍ ແລະ ຄວາມຈິບຫາຍ.” (ພຣະບັນຍັດສອງ 30:15). ຄວາມຕາຍທີ່ກ່າວ ເຖິງໃນຂໍ້ພຣະຄຳພີເຫຼົ່ານີ້ ບໍ່ແມ່ນຄວາມຕາຍອັນເປັນຜົນຈາກຄວາມບາບຂອງອາດາມ ເພາະມະນຸດ ທຸກຄົນຕ້ອງຮັບຜົນກະທົບຈາກໂທດຂອງການລ່ວງລະເມີດຂອງເພິ່ນ. ແຕ່ໝາຍເຖິງ “ຄວາມຕາຍ ຄັ້ງທີສອງ” (ພຣະນິມິດ 20:14) ເຊິ່ງໃນຂໍ້ພຣະຄຳພີຂ້າງເທິງນີ້ ໄດ້ຖືກນຳມາປຽບທຽບກັບຊີວິດ ນິຣັນ. {GC 544.1}

ຍ້ອນຄວາມຜິດບາບຂອງອາດາມ, ຄວາມຕາຍຈຶ່ງໄດ້ຕົກທອດມາເຖິງມະນຸດທຸກຄົນ. ທຸກຄົນລ້ວນ ແຕ່ຕ້ອງຕາຍ. ແຕ່ຕາມແຜນການແຫ່ງຄວາມລອດ, ທຸກຄົນຈະຖືກນຳອອກມາຈາກບ່ອນຝັງສົບຂອງຕົນ. “ຈະມີການເປັນຄືນມາຈາກຕາຍທັງຂອງຄົນຊອບທຳ ແລະ ຄົນຊົ່ວ.” “ດ້ວຍວ່າ ໃນອາດາມຄົນທັງປວງ ກໍຕາຍສັນໃດ ໃນພຣະຄຣິສເຈົ້າຄົນທັງປວງກໍຈະຖືກບັນດານໃຫ້ໄດ້ຮັບຊີວິດສັນນັ້ນ.” (ກິດຈະການ 24:15 LCV; 1 ໂກຣິນໂທ 15:22 LCV). ແຕ່ວ່າມີຄວາມແຕກຕ່າງລະຫວ່າງສອງກຸ່ມທີ່ຟື້ນຄືນ ຊີວິດນັ້ນ. “ຢ່າປະຫຼາດໃຈໃນຂໍ້ນີ້, ເພາະຈະເຖິງເວລາໜຶ່ງເມື່ອທຸກຄົນທີ່ຢູ່ໃນຂຸມຝັງສົບຂອງຕົນ ຈະ ໄດ້ຍິນສຽງຂອງພຣະບຸດ ແລະ ຈະໄດ້ອອກມາ, ບັນດາຜູ້ທີ່ເຮັດດີກໍຈະເປັນຄືນມາສູ່ຊີວິດ ແລະ ຜູ້ ທີ່ເຮັດຊົ່ວກໍຈະເປັນຄືນມາເພື່ອຮັບການລົງໂທດ.” (ໂຢຮັນ 5:28, 29 LCV). ສ່ວນ “ຄົນທີ່ ຖືວ່າສົມຄວນ” ສຳລັບການຟື້ນຄືນຊີວິດຄັ້ງທີໜຶ່ງນັ້ນ ຄືຜູ້ທີ່ໄດ້ຮັບພຣະພອນ ແລະ ເປັນຄົນ ບໍຣິສຸດ “ຄວາມຕາຍຄັ້ງທີສອງຈະບໍ່ມີອຳນາດເໜືອພວກເຂົາ.” (ລູກາ 20:35 LCV; ພຣະນິມິດ 20:6 LCV). ສ່ວນຜູ້ທີ່ບໍ່ໄດ້ຮັບການອະໄພໂທດໂດຍການກັບໃຈເຊື່ອ ກໍຈະຕ້ອງຮັບໂທດຂອງການ ລະເມີດ, ກໍຄື “ຄ່າຕອບແທນຂອງຄວາມບາບ.” ພວກເຂົາຈະຕ້ອງຮັບການລົງໂທດທີ່ມີຄວາມໜັກ ເບົາ ແລະ ໄລຍະເວລາແຕກຕ່າງກັນ “ຕາມການກະທຳຂອງຕົນ,” ແຕ່ສຸດທ້າຍກໍຈະຈົບລົງດ້ວຍຄວາມ ຕາຍຄັ້ງທີສອງ. ດ້ວຍວ່າ, ເປັນໄປບໍ່ໄດ້ທີ່ພຣະເຈົ້າຈະຊ່ວຍຄົນບາບໃຫ້ພົ້ນ ໃນຂະນະທີ່ພວກເຂົາຍັງ ດຳເນີນຊີວິດຢູ່ໃນຄວາມບາບຂອງຕົນ ເພາະຈະເປັນການຂັດຕໍ່ຄວາມຍຸຕິທຳ ແລະ ຄວາມເມດຕາຂອງ ພຣະອົງ. ສະນັ້ນ, ພຣະອົງຈຶ່ງເອົາຊີວິດໄປຈາກພວກເຂົາ ເຊິ່ງພວກເຂົາໄດ້ສູນເສຍໄປແລ້ວຍ້ອນການ ລະເມີດ ແລະ ໄດ້ພິສູດໃຫ້ເຫັນວ່າ ຕົນບໍ່ສົມຄວນໄດ້ຮັບ. ພຣະວິນຍານບໍຣິສຸດຊົງດົນໃຈຄົນໜຶ່ງໃຫ້ຂຽນ

ຂໍ້ຄວາມໃນພຣະຄຳພີວ່າ: “ອີກບໍ່ດົນຄົນຊົ່ວຮ້າຍຈະດັບສູນໄປ ເຈົ້າອາດຊອກຫາພວກເຂົາ ແຕ່ກໍຈະບໍ່ພົບ.” ແລ້ວມີອີກຜູ້ໜຶ່ງຂຽນວ່າ: “ຕ່າງກໍຈະສະຫງ່າຍໄປຈົນໝົດສິ້ນ.” (ເພງສັນລະເສີນ 37:10; ໂອບາດີຢາ 1:16). ພວກເຂົາຈະຈົມລົງສູ່ຄວາມມືດມົນແຫ່ງຄວາມສິ້ນຫວັງຕະຫຼອດຊົ່ວນິຣັນດອນດ້ວຍຄວາມອັບປະຍົດອົດສູ. {GC 544.2}

ສິ້ນສຸດຄວາມທຸກ

ຄວາມບາບຈະສິ້ນສຸດລົງໄປພ້ອມກັບວິບັດ ແລະ ຄວາມພິນາດທັງໝົດທີ່ເປັນຜົນຈາກຄວາມບາບ. ຜູ້ຂຽນເພງສັນລະເສີນກ່າວວ່າ: “ພຣະອົງໄດ້ . . . ທຳລາຍຄົນຊົ່ວຈົນບໍ່ມີຜູ້ໃດຈົດຈຳພວກເຂົາຕໍ່ໄປອີກ. ສັດຕູພວກຂ້ານ້ອຍໄດ້ດັບສິ້ນຕະຫຼອດໄປ.” (ເພງສັນລະເສີນ 9:5, 6). ໃນພຣະນິມິດ ເມື່ອໂຢຮັນເຫັນສະພາບຂອງຊີວິດນິຣັນ ເພິ່ນໄດ້ຍິນການສັນລະເສີນທົ່ວຈັກກະວານ ໂດຍບໍ່ມີສຽງຜິດພ້ຽນແຕ່ຢ່າງໃດ. ເພິ່ນໄດ້ຍິນສິ່ງມີຊີວິດທັງໝົດໃນສະຫວັນ ແລະ ແຜ່ນດິນໂລກຖວາຍກຽດແດ່ພຣະຜູ້ສ້າງ. (ເບິ່ງ ພຣະນິມິດ 5:13). ໃນເວລານັ້ນ, ຈະບໍ່ມີຜູ້ທີ່ພິນາດເຫຼືອໄວ້ຕະຫຼອດນິດນິຣັນ ໃຫ້ໝິ່ນປະໝາດພຣະເຈົ້າໃນສະພາບທີ່ຖືກລົງໂທດໃຫ້ທົນທຸກທໍລະມານ. ຈະບໍ່ມີຜູ້ໃດດິ້ນທຸລົນທຸລາຍຢູ່ໃນຂຸມນະຣົກ ໃຫ້ສົ່ງສຽງຮ້ອງໂຫຍຫວນຂອງພວກເຂົາ ປະສານບັນເລງໄປກັບສຽງເພງຂອງຜູ້ທີ່ໄດ້ຮັບຄວາມລອດພົ້ນ. {GC 545.1}

ຫຼັກຄຳສອນທີ່ວ່າ ຄົນຍັງມີສະຕິຮູ້ສຶກຕົວຫຼັງຈາກຕາຍແລ້ວນັ້ນ ຕັ້ງຢູ່ເທິງຄວາມເຊື່ອຜິດພື້ນຖານວ່າ ມະນຸດເປັນອະມະຕະໂດຍທຳມະຊາດ. ຫຼັກຄຳສອນນີ້ ກໍຄືກັນກັບຫຼັກຄຳສອນເລື່ອງການທໍລະມານຊົ່ວນິຣັນດອນ ທີ່ຂັດແຍ້ງກັບຄຳສອນໃນພຣະຄຳພີ, ຂັດກັບເຫດຜົນ ແລະ ຂັດຕໍ່ຄວາມຮູ້ສຶກພື້ນຖານຂອງການເປັນມະນຸດ. ຕາມຄວາມເຊື່ອຂອງຄົນທົ່ວໄປ, ຜູ້ທີ່ໄດ້ຮັບຄວາມລອດໃນສະຫວັນຮູ້ເຫັນທຸກສິ່ງທີ່ເກີດຂຶ້ນໃນໂລກ ໂດຍສະເພາະຊີວິດຂອງໝູ່ເພື່ອນທີ່ພວກເຂົາໄດ້ຈາກໄປນັ້ນ. ແຕ່ຖ້າຄົນທີ່ຕາຍແລ້ວຮູ້ເຖິງຄວາມທຸກຍາກຂອງຄົນທີ່ຍັງມີຊີວິດຢູ່ ແລະ ເຫັນຄວາມບາບຂອງຄົນທີ່ຕົນຮັກນັ້ນ ແລ້ວຈະມີຄວາມສຸກໄດ້ແນວໃດ? ຖ້າພວກເຂົາເຫັນຜູ້ທີ່ຕົນຮັກຕ້ອງທົນຕໍ່ຄວາມເສົ້າໂສກ, ຄວາມຜິດຫວັງ ແລະ ຄວາມທຸກລຳບາກໃນຊີວິດ ຈະເຮັດໃຫ້ພວກເຂົາຊົມຊື່ນຍິນດີໄດ້ແນວໃດ? ຄົນທີ່ຕ້ອງຄອຍເຝົ້າເບິ່ງໝູ່ເພື່ອນໃນໂລກ ຈະໄດ້ຮັບຄວາມສຸກໃນສະຫວັນຫຼາຍສ່ຳໃດ? ນອກຈາກນັ້ນ, ຂ່າງໜ້າຂົນລຸກທີ່ສຸດສຳລັບຄວາມເຊື່ອຜິດທີ່ວ່າ ທັນທີທັນໃດທີ່ລົມຫາຍໃຈສຸດທ້າຍອອກຈາກຮ່າງກາຍ ວິນຍານຂອງຄົນທີ່ບໍ່ຍອມກັບໃຈກໍຈະຖືກສົ່ງໄປໃນແປວໄຟນະຣົກ! ເປັນຄວາມທຸກໃຈແທ້ ຖ້າຕ້ອງເຫັນໝູ່ເພື່ອນຕາຍໄປໂດຍບໍ່ທັນໄດ້ກຽມພ້ອມ ແລະ ຕ້ອງເຂົ້າສູ່ຄວາມທຸກທໍລະມານ ແລະ ຄວາມບາບຊົ່ວຕະຫຼອດນິຣັນ. ຫຼາຍຄົນກາຍເປັນບ້າ ຍ້ອນເຂົ້າໃຈຜິດໃນເລື່ອງທີ່ໜ້າຢ້ານກົວນີ້. {GC 545.2}

ພຣະຄຳພີກ່າວແນວໃດກ່ຽວກັບປະເດັນເຫຼົ່ານີ້? ກະສັດດາວິດປະກາດວ່າ ຫຼັງຈາກຕາຍໄປແລ້ວ ມະນຸດຈະບໍ່ຮູ້ສຶກຫຍັງເລີຍ. “ເມື່ອລົມຫາຍໃຈຂອງພວກເຂົາພາກໄປ ພວກເຂົາກໍກັບຄືນເປັນດິນ, ໃນວັນດຽວກັນນັ້ນ ຄວາມຄິດຂອງເຂົາກໍພິນາດ.” (ເພງສັນລະເສີນ 146:4 ດັດແປງຈາກສະບັບ TKJV). ກະສັດໂຊໂລໂມນຂຽນໃນທຳນອງດຽວກັນວ່າ: “ຜູ້ທີ່ມີຊີວິດຢູ່ ກໍຮູ້ວ່າຕົນຈະຕາຍໄປ; ແຕ່ຜູ້ທີ່ຕາຍໄປແລ້ວ ກໍບໍ່ຮູ້ຫຍັງເລີຍ.” “ຄວາມຮັກ, ຄວາມຊັງ ແລະ ຕັນຫາຂອງພວກເຂົາ ລ້ວນແຕ່ໄດ້ຕາຍໄປກັບພວກເຂົາດ້ວຍ. ພວກເຂົາຈະບໍ່ມີສ່ວນກັບເຫດການໃດ ໆ ທີ່ເກີດຂຶ້ນຢູ່ໃຕ້ດວງຕາເວັນອີກເລີຍ.” “ໃນແດນຂອງຄົນຕາຍນັ້ນ ຈະບໍ່ມີການກະທຳ, ບໍ່ມີຄວາມຄິດ, ບໍ່ມີຄວາມຮູ້, ບໍ່ມີປັນຍາໃດ ໆ ແລະ ໃນບ່ອນນັ້ນແຫຼະທີ່ພວກເຈົ້າຈະໄປ.” (ປັນຍາຈານ 9:5, 6, 10). {GC 545.3}

ເມື່ອພຣະເຈົ້າຊົງຕອບຄຳອະທິຖານຂອງກະສັດເຮເຊກີຢາ ໂດຍຊົງຕໍ່ຊີວິດຂອງເພິ່ນອອກໄປອີກ ສິບຫ້າປີ, ເພິ່ນໄດ້ສຳນຶກໃນພຣະຄຸນ ຈຶ່ງສັນລະເສີນພຣະເຈົ້າສຳລັບພຣະເມດຕາອັນໃຫຍ່ຫຼວງຂອງ ພຣະອົງ. ໃນບົດເພງນັ້ນ ເພິ່ນບອກເຫດຜົນທີ່ເພິ່ນຊື່ນຊົມຍິນດີວ່າ: "ບໍ່ມີຜູ້ໃດຍ້ອງຍໍສັນລະເສີນພຣະເຈົ້າ ໄດ້ໃນແດນມໍຣະນາ ຄົນຕາຍວາງໃຈໃນຄວາມສັດຊື່ຂອງພຣະອົງບໍ່ໄດ້. ແມ່ນຜູ້ທີ່ມີຊີວິດຢູ່ເທົ່ານັ້ນທີ່ ສັນລະເສີນພຣະອົງ ດັ່ງທີ່ຂ້ານ້ອຍສັນລະເສີນພຣະອົງຢູ່ດຽວນີ້." (ເອຊາຢາ 38:18, 19). ມີການ ສອນຫຼັກສາສະໜາສາດທົ່ວໄປໃນແນວທາງທີ່ຜິດວ່າ ຄົນຊອບທຳທີ່ຕາຍແລ້ວໄດ້ເຂົ້າໄປສູ່ຄວາມສຸກ ໃນສະຫວັນ ແລະ ກຳລັງສັນລະເສີນພຣະເຈົ້າດ້ວຍສຽງອະມະຕະ, ແຕ່ກະສັດເຮເຊກີຢາບໍ່ໄດ້ເຫັນ ວ່າຄວາມຕາຍຈະມີຄວາມຫວັງເຊັ່ນນັ້ນ. ຖ້ອຍຄຳຂອງເພິ່ນສອດຄ່ອງກັບຂໍ້ຄວາມໃນເພງສັນລະເສີນ ທີ່ວ່າ: "ໃນແດນມໍຣະນານັ້ນ ຈະບໍ່ມີຜູ້ໃດຄິດເຖິງພຣະອົງ ບໍ່ມີຜູ້ໃດສັນລະເສີນພຣະອົງຢູ່ໃນທີ່ນັ້ນ ໄດ້." "ຄົນຕາຍບໍ່ສັນລະເສີນພຣະເຢໂຮວາ ຫຼື ຜູ້ທີ່ລົງໄປສູ່ທີ່ສະຫງັດກໍເຊັ່ນນັ້ນ." (ເພງສັນລະເສີນ 6:5; 115:17 TKJV). *{GC 546.1}*

ໃນວັນເພັນເຕຄໍສະເຕ ເປໂຕໄດ້ປະກາດວ່າ ກະສັດດາວິດ "ໄດ້ຕາຍ ແລະ ໄດ້ຖືກຝັງໄວ້ແລ້ວ ແລະ ອຸບມຸງຂອງເພິ່ນກໍຢູ່ບ່ອນນີ້ຈົນເຖິງທຸກວັນນີ້." "ເພາະດາວິດບໍ່ໄດ້ຂຶ້ນໄປເທິງສະຫວັນ." (ກິດຈະການ 2:29 LCV, 34 LCV). ຂໍ້ເທັດຈິງທີ່ດາວິດຍັງຄົງຢູ່ໃນອຸບມຸງຝັງສົບຈົນເຖິງການຟື້ນຈາກຄວາມ ຕາຍນັ້ນ ພິສູດໃຫ້ເຫັນວ່າ ຜູ້ຊອບທຳບໍ່ໄດ້ຂຶ້ນສະຫວັນທັນທີເມື່ອເສຍຊີວິດ. ດາວິດຈະນັ່ງຢູ່ເບື້ອງ ຂວາພຣະຫັດຂອງພຣະເຈົ້າໄດ້ ກໍຕໍ່ເມື່ອມີການຟື້ນຄືນຊີວິດ ແລະ ຍ້ອນພຣະຄຣິສໄດ້ຄືນພຣະຊົນ ເທົ່ານັ້ນ. *{GC 546.2}*

ອາຈານໂປໂລກ່າວວ່າ: "ຖ້າຄົນຕາຍບໍ່ໄດ້ເປັນຄືນມາ, ແລ້ວພຣະຄຣິສເຈົ້າກໍບໍ່ໄດ້ເປັນຄືນມາ ເໝືອນກັນ; ແລະ ຖ້າພຣະຄຣິສເຈົ້າບໍ່ໄດ້ເປັນຄືນມາຈາກຕາຍ, ຄວາມເຊື່ອຂອງພວກເຈົ້າ ກໍໄຮ້ ປະໂຫຍດ; ພວກເຈົ້າກໍຍັງຢູ່ໃນບາບຂອງຕົນ. ແລ້ວບັນດາຜູ້ທີ່ໄດ້ຫຼັບໄປໃນພຣະຄຣິສເຈົ້າກໍຈິບຫາຍໄປ ດ້ວຍ." (1 ໂກຣິນໂທ 15:16–18 LCV). ຖ້າຜູ້ຊອບທຳໄດ້ໄປສະຫວັນທັນທີເມື່ອເສຍຊີວິດເປັນເວລາສີ່ ພັນປີແລ້ວ, ເປັນຫຍັງອາຈານໂປໂລຈຶ່ງກ່າວວ່າ ຖ້າບໍ່ມີການຄືນມາຈາກຕາຍ "ບັນດາຜູ້ທີ່ໄດ້ຫຼັບໄປໃນ ພຣະຄຣິສເຈົ້າກໍຈິບຫາຍໄປດ້ວຍ"? ເພາະຖ້າຂຶ້ນສະຫວັນທັນທີເມື່ອຕາຍນັ້ນ ການຟື້ນຈາກຄວາມຕາຍ ກໍບໍ່ຈຳເປັນ. *{GC 546.3}*

ທິນເດວ ຜູ້ຍອມຕາຍເພື່ອຄວາມເຊື່ອ ໄດ້ກ່າວເຖິງສະພາບຂອງຄົນຕາຍວ່າ: "ຂ້າພະເຈົ້າຂໍຍອມຮັບ ຢ່າງເປີດເຜີຍວ່າ ຂ້າພະເຈົ້າບໍ່ເຊື່ອວ່າ ພວກເຂົາຢູ່ໃນສະຫງ່າຣາສີອັນສົມບູນຄືກັນກັບພຣະຄຣິສ ຫຼື ເຫຼົ່າ ທູດສະຫວັນທີ່ພຣະເຈົ້າຊົງເລືອກໄວ້; ສິ່ງເຫຼົ່ານີ້ບໍ່ແມ່ນຫຼັກຄວາມເຊື່ອຂອງຂ້າພະເຈົ້າ ເພາະຖ້າມັນ ເປັນແນວນັ້ນແທ້ ຂ້າພະເຈົ້າກໍບໍ່ເຫັນວ່າ ການປະກາດເລື່ອງການເປັນຄືນມາຈາກຄວາມຕາຍຂອງ ເນື້ອໜັງ ຈະເປັນປະໂຫຍດຫຍັງ."[1] *{GC 547.1}*

ເປັນຄວາມຈິງທີ່ປະຕິເສດບໍ່ໄດ້ວ່າ ຄວາມຫວັງທີ່ຈະໄດ້ຮັບຄວາມສຸກຕະຫຼອດໄປເມື່ອຕາຍນັ້ນ ໄດ້ນຳ ໄປສູ່ການລະເລີຍຄຳສອນໃນພຣະຄຳພີ ເລື່ອງການຟື້ນຄືນຊີບຢ່າງກວ້າງຂວາງ. ດຣ. ອາດາມ ຄລາກ ໄດ້ສັງເກດເຫັນແນວໂນ້ມນີ້ ແລະ ກ່າວວ່າ: "ຄຳສອນເລື່ອງການຟື້ນຄືນຊີບເບິ່ງຄືວ່າ ເຄີຍມີຄວາມ ສຳຄັນຫຼາຍກວ່ານີ້ໃນກຸ່ມຄຣິສຕຽນລຸ້ນທຳອິດ ເມື່ອທຽບກັບ*ປັດຈຸບັນ*! ເປັນຫຍັງຈຶ່ງເປັນແນວນີ້? ພວກ ອັກຄະສາວົກເນັ້ນຢ້ຳເລື່ອງນີ້ຢູ່ສະເໝີ ແລະ ໃຊ້ມັນເພື່ອກະຕຸ້ນໃຫ້ຜູ້ຕິດຕາມພຣະເຈົ້າຊົມຊື່ນຍິນດີ, ມີ ຄວາມພາກພຽນ ແລະ ເຊື່ອຟັງ. ແຕ່ຜູ້ສືບທອດການຮັບໃຊ້ຂອງພວກເພິ່ນໃນປັດຈຸບັນ ແທບບໍ່ເຄີຍ

[1] ວິນລຽມ ທິນເດວ (William Tyndale), ຄຳນຳປຶ້ມພັນທະສັນຍາໃໝ່ ສະບັບປີ 1534. ພິມຄືນໃໝ່ໃນ *British Reformers—Tindal, Frith, Barnes*, ໜ້າ 349.

ເວົ້າເຖິງການຟື້ນຄືນຊີບເລີຍ! ພວກອັກຄະສາວົກປະກາດແນວໃດ ຄຣິສຕຽນລຸ້ນທຳອິດກໍເຊື່ອແນວນັ້ນ; ແລ້ວພວກເຮົາປະກາດແນວໃດ ຜູ້ຟັງຂອງພວກເຮົາກໍເຊື່ອແນວນັ້ນເຊັ່ນກັນ. ໃນຂ່າວປະເສີດບໍ່ມີຄຳສອນໃດທີ່ຖືກເນັ້ນຢ້ຳຫຼາຍກວ່ານີ້; ແຕ່ກໍບໍ່ມີຄຳສອນໃດໃນລະບົບການເທດສະໜາໃນປັດຈຸບັນ ທີ່ຖືກລະເລີຍຫຼາຍກວ່ານີ້!”[2] *{GC 547.2}*

ສະພາບນີ້ໄດ້ສືບທອດກັນມາ ຈົນຄວາມຈິງອັນຮຸ່ງເຮືອງເລື່ອງການຟື້ນຄືນຊີບ ໄດ້ຖືກບົດບັງ ແລະ ສູນຫາຍໄປເກືອບໝົດສິ້ນຈາກວົງການຄຣິສຕຽນທົ່ວໂລກແລ້ວ. ນັກຂຽນດ້ານສາສະໜາຄົນສຳຄັນຜູ້ໜຶ່ງ ໄດ້ອະທິບາຍຖ້ອຍຄຳຂອງອາຈານໂປໂລໃນ 1 ເທສະໂລນີກ 4:13–18 ໃນທາງທີ່ຜິດວ່າ: “ເພື່ອເປັນການປອບໃຈທີ່ແທ້ຈິງ, ຄຳສອນທີ່ວ່າຜູ້ຊອບທຳຈະມີຊີວິດຕະຫຼອດໄປໃນສະຫວັນນັ້ນ ໄດ້ມາແທນທີ່ຄຳສອນເລື່ອງການສະເດັດມາຄັ້ງທີສອງຂອງອົງພຣະຄຣິສ ເຊິ່ງເປັນຄຳສອນທີ່ພວກເຮົາຖືວ່າໜ້າສົງໄສ. ອົງພຣະຜູ້ເປັນເຈົ້າສະເດັດມາຫາພວກເຮົາເມື່ອເຮົາຕາຍ. ນັ້ນແຫຼະ ຄືສິ່ງທີ່ພວກເຮົາຄວນເຝົ້າລໍຄອຍ. ຄົນຕາຍໄດ້ຮັບສະຫງ່າຣາສີແລ້ວ ແລະ ບໍ່ຕ້ອງລໍຖ້າສຸງແກ ເພື່ອຮັບການພິພາກສາ ແລະ ຄວາມສຸກຂອງພວກເຂົາ.” *{GC 547.3}*

ຟື້ນຄືນຊີບສູ່ຊີວິດນິຣັນ

ແຕ່ເມື່ອພຣະເຢຊູກຳລັງຈະຈາກພວກສາວົກໄປ, ພຣະອົງບໍ່ໄດ້ບອກວ່າພວກເຂົາຈະໄປຫາພຣະອົງໃນບໍ່ຊ້ານັ້ນ. ແຕ່ຊົງກ່າວວ່າ “ເຮົາກຳລັງໄປບ່ອນນັ້ນ ເພື່ອຈັດຕຽມບ່ອນໄວ້ສຳລັບພວກເຈົ້າ ແລະ ເມື່ອເຮົາໄປຈັດຕຽມບ່ອນໄວ້ສຳລັບພວກເຈົ້າ, ເຮົາຈະກັບຄືນມາຮັບເອົາພວກເຈົ້າໄປຢູ່ກັບເຮົາ.” (ໂຢຮັນ 14:2, 3 LCV). ສ່ວນອາຈານໂປໂລໄດ້ກ່າວຕື່ມອີກວ່າ: “ອົງພຣະຜູ້ເປັນເຈົ້າເອງຈະລົງມາຈາກສະຫວັນດ້ວຍສຽງຄຳສັ່ງດັງກ້ອງ ດ້ວຍສຽງແຫ່ງອັກຄະເທວະດາ ແລະ ດ້ວຍສຽງແກເອີ້ນຂອງພຣະເຈົ້າ ແລ້ວຜູ້ທີ່ຕາຍໃນພຣະຄຣິສເຈົ້າຈະເປັນຄືນມາກ່ອນ. ຫຼັງຈາກນັ້ນ, ພວກເຮົາຜູ້ທີ່ຍັງມີຊີວິດ ແລະ ຜູ້ທີ່ຍັງເຫຼືອຢູ່ກໍຈະຖືກຮັບຂຶ້ນໄປໃນເມກພ້ອມກັບຄົນເຫຼົ່ານັ້ນ ເພື່ອພົບກັບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ ແລະ ເພື່ອວ່າພວກເຮົາຈະຢູ່ກັບອົງພຣະຜູ້ເປັນເຈົ້າຕະຫຼອດໄປເປັນນິດ.” ແລ້ວ ເພິ່ນກໍເພີ່ມເຕີມວ່າ: “ເຫດສະນັ້ນ, ຈົ່ງໃຫ້ໝູນໃຈເຊິ່ງກັນແລະກັນດ້ວຍຂໍ້ຄວາມເຫຼົ່ານີ້.” (1 ເທສະໂລນີກ 4:16–18 LCV). ຖ້ອຍຄຳເຫຼົ່ານີ້ເປັນທີ່ປອບໃຈ ເຊິ່ງແຕກຕ່າງທີ່ສຸດຈາກຖ້ອຍຄຳຂອງນັກເທດທີ່ກ່າວໄວ້ຂ້າງເທິງ ຜູ້ເຊື່ອວ່າທຸກຄົນຈະໄດ້ລອດພົ້ນ. ຄົນນັ້ນປອບໃຈຍາດຕິພີ່ນ້ອງຂອງຜູ້ຕາຍໂດຍການຢືນຢັນວ່າ ເຖິງແມ່ນວ່າລາວຈະເປັນຄົນບາບຫຼາຍປານໃດກໍຕາມ, ແຕ່ເມື່ອລາວຂາດລົມຫາຍໃຈໃນໂລກນີ້, ລາວກໍຈະໄດ້ຖືກຮັບໄປຢູ່ກັບເຫຼົ່າເທວະດາ. ແຕ່ອາຈານໂປໂລໄດ້ຊີ້ໃຫ້ພີ່ນ້ອງເຫັນເຖິງການສະເດັດມາຂອງອົງພຣະຜູ້ເປັນເຈົ້າໃນອະນາຄົດ. ເມື່ອນັ້ນ, ອຳນາດການຄຸມຂັງແຫ່ງຊຸມຝັງສົບກໍຈະຖືກທຳລາຍ ແລະ “ຜູ້ຕາຍໃນພຣະຄຣິສ” ຈະເປັນຂຶ້ນມາສູ່ຊີວິດອັນຕະຫຼອດໄປເປັນນິດ. *{GC 548.1}*

ກ່ອນທີ່ຜູ້ໃດຈະໄດ້ເຂົ້າໄປຮັບຜາສາດໃນເມືອງສະຫວັນ, ຄະດີຂອງພວກເຂົາຕ້ອງໄດ້ຮັບການສືບສວນ ແລະ ອຸປະນິໄສພ້ອມທັງການກະທຳຂອງພວກເຂົາ ຕ້ອງໄດ້ຮັບການພິຈາລະນາຕໍ່ພຣະພັກພຣະເຈົ້າ. ທຸກຄົນຈະຖືກພິພາກສາຕາມສິ່ງທີ່ຂຽນໄວ້ໃນປຶ້ມບັນທຶກ ແລະ ຈະໄດ້ຮັບການຕອບແທນຕາມການກະທຳຂອງຕົນ. ການພິພາກສານີ້ບໍ່ໄດ້ເກີດຂຶ້ນເມື່ອຄົນຕາຍ. ຈົ່ງພິຈາລະນາຖ້ອຍຄຳຂອງອັກຄະສາວົກໂປໂລທີ່ກ່າວວ່າ: “ພຣະອົງໄດ້ຊົງກຳນົດວັນໜຶ່ງໄວ້ ເຊິ່ງໃນວັນນັ້ນ ພຣະອົງຈະຊົງພິພາກສາໂລກ

[2] *ປຶ້ມອະທິບາຍພຣະຄຳພີ*–ຄຳເຫັນກ່ຽວກັບ 1 ໂກຣິນໂທ 15, ວັກ 3.

ຕາມຄວາມຍຸຕິທຳ ໂດຍມະນຸດຜູ້ໜຶ່ງ ເຊິ່ງພຣະອົງໄດ້ຊົງຕັ້ງໄວ້ ແລະ ພຣະເຈົ້າໄດ້ຊົງໂຜດໃຫ້ຄົນ ທັງປວງມີຄວາມແນ່ໃຈໃນເລື່ອງນີ້ ໂດຍຊົງບັນດານໃຫ້ມະນຸດຜູ້ນັ້ນເປັນຄືນມາຈາກຕາຍ." (ກິດຈະການ 17:31). ໃນຂໍ້ນີ້ ອາຈານໂປໂລໄດ້ຊີ້ແຈງຢ່າງຈະແຈ້ງວ່າ ມີການກຳນົດເວລາທີ່ແນ່ນອນໃນອະນາຄົດ ສຳລັບການພິພາກສາໂລກ. {GC 548.2}

ທ່ານຢູດາໄດ້ອ້າງເຖິງຊ່ວງເວລາດັ່ງກ່າວວ່າ: "ບັນດາເທວະດາຜູ້ທີ່ບໍ່ຮັກສາອຳນາດໜ້າທີ່ຂອງ ຕົນ ແຕ່ໄດ້ປະຖິ້ມຖິ່ນຖານທີ່ຢູ່ຂອງຕົນເອງ ພຣະອົງໄດ້ກັກຂັງເທວະດາເຫຼົ່ານີ້ໄວ້ໃນບ່ອນມືດ, ລ່ຳມດ້ວຍ ໂສ້ຕະຫຼອດໄປເປັນນິດ ເພື່ອລໍຖ້າການພິພາກສາໃນວັນອັນຍິ່ງໃຫຍ່ນັ້ນ." ນອກຈາກນັ້ນ, ເພິ່ນຍັງໄດ້ອ້າງ ຄຳເວົ້າຂອງເອນົກອີກວ່າ: "ອົງພຣະຜູ້ເປັນເຈົ້າຈະສະເດັດມາ ພ້ອມຝູງເທວະດາຕົນບໍຣິສຸດຂອງພຣະອົງ ນັບເປັນໝື່ນໆ, ເພື່ອຈະນຳເອົາການຕັດສິນມາສູ່ທຸກໆຄົນ." (ຢູດາ 6 LCV, 14–15 LCV). ໂຢຮັນ ປະກາດວ່າ: "ຂ້າພະເຈົ້າໄດ້ເຫັນບັນດາຜູ້ທີ່ຕາຍແລ້ວ ທັງຜູ້ໃຫຍ່ ແລະ ຜູ້ນ້ອຍ ຢືນຢູ່ຕໍ່ໜ້າພຣະ ຣາຊບັນລັງນັ້ນ ແລະ ໜັງສືຕ່າງໆ ກໍໄຂອອກ . . . ແລະ ຄົນທັງຫຼາຍທີ່ຕາຍແລ້ວ ກໍຖືກພິພາກສາ ຕາມການປະຕິບັດຂອງເຂົາ ທີ່ຂຽນໄວ້ໃນໜັງສືເຫຼົ່ານັ້ນ." (ພຣະນິມິດ 20:12 LO1972). {GC 548.3}

ແຕ່ຖ້າຫາກວ່າຄົນຕາຍກຳລັງນ່ວນຊື່ນຢູ່ສະຫວັນ ຫຼື ກຳລັງທົນທຸກທໍລະມານໃນຂຸມນະຣົກ ແລ້ວ, ຍັງຈະຕ້ອງມີການພິພາກສາໄປເພື່ອຫຍັງອີກ? ຄຳສອນໃນພຣະຄຳຂອງພຣະເຈົ້າກ່ຽວກັບ ປະເດັນສຳຄັນເຫຼົ່ານີ້ບໍ່ໄດ້ຄຸມເຄືອ ແລະ ບໍ່ໄດ້ຂັດແຍ້ງກັນ, ຄົນທົ່ວໄປສາມາດເຂົ້າໃຈໄດ້. ແຕ່ມີ ໃຜແດ່ເມື່ອຄິດເປັນເຫດເປັນຜົນແລ້ວ ຈະເຫັນວ່າທິດສະດີທີ່ສອນກັນຢູ່ໃນປັດຈຸບັນເປັນເລື່ອງທີ່ມີ ປັນຍາ ຫຼື ຄວາມຍຸຕິທຳ? ເປັນໄປໄດ້ບໍທີ່ຄົນຊອບທຳຈະໄດ້ຍິນຄຳຍ້ອງຍໍຫຼັງຈາກທີ່ຜ່ານການພິພາກສາ ວ່າ "ດີຫຼາຍ ເຈົ້າເປັນຄົນຮັບໃຊ້ທີ່ດີ ແລະ ສັດຊື່ . . . *ຈົ່ງມາຮ່ວມ*ຊື່ນຊົມຍິນດີກັບເຮົາ" ທັງໆ ທີ່ພວກເຂົາໄດ້ຢູ່ຕໍ່ພຣະພັກພຣະອົງມາແລ້ວເປັນເວລາດົນນານ? ເປັນໄປໄດ້ບໍວ່າຄົນອະທຳຈະຖືກ ນຳອອກມາຈາກບ່ອນທໍລະມານ ເພື່ອຮັບຄຳຕັດສິນຈາກພຣະເຈົ້າຜູ້ຊົງພິພາກສາມະນຸດທັງປວງວ່າ "ພວກເຈົ້າທັງຫຼາຍທີ່ຖືກສາບແຊ່ງ ຈົ່ງໄປຈາກເຮົາ, ຈົ່ງລົງໄປໃນບຶງໄຟທີ່ໄໝ້ຢູ່ເປັນນິດ?" (ມັດທາຍ 25:21 LCV, 41 LCV). ໂອ້ ຊ່າງເປັນການຫຼອກລວງທີ່ໜ້າຢ້ານກົວແທ້! ເປັນການໝິ່ນປະໝາດ ສະຕິປັນຍາ ແລະ ຄວາມຍຸຕິທຳຂອງພຣະເຈົ້າຢ່າງໜ້າໃຈຫາຍ! {GC 549.1}

ທິດສະດີທີ່ສອນວ່າມະນຸດມີດວງວິນຍານທີ່ອະມະຕະ ເປັນຄຳສອນຜິດອັນໜຶ່ງທີ່ຄຣິສຕະຈັກໂຣມ ໄດ້ຢືມມາຈາກລັດທິນອກສາສະໜາ ແລະ ໄດ້ນຳມາປະປົນກັບຫຼັກຄຳສອນຄຣິສຕຽນ. ມາຕິນ ລູເທີ ຈັດຄຳສອນນີ້ໄວ້ກັບ "ນິທານໜ້າຢ້ານ ທີ່ເປັນສ່ວນໜຶ່ງຂອງກອງຂີ້ເຫຍື້ອແຫ່ງຄຳຕັດສິນຂອງ ສັນຕະປາປາ."[3] ເມື່ອອະທິບາຍຂໍ້ຄວາມຂອງກະສັດໂຊໂລໂມນໃນພຣະທຳປັນຍາຈານທີ່ວ່າຄົນຕາຍບໍ່ຮູ້ ຫຍັງເລີຍ, ນັກປະຕິຮູບຜູ້ນີ້ກ່າວວ່າ: "ນີ້ແມ່ນອີກຂໍ້ໜຶ່ງທີ່ພິສູດວ່າ ຄົນຕາຍບໍ່ມີ . . . ຄວາມຮູ້ສຶກ. ເພິ່ນ ກ່າວວ່າບໍ່ມີໜ້າທີ່, ບໍ່ມີການຄິດຄຳນວນ, ບໍ່ມີຄວາມຮູ້, ບໍ່ມີສະຕິປັນຍາຢູ່ທີ່ນັ້ນ. ກະສັດໂຊໂລໂມນ ອອກຄວາມເຫັນວ່າ ຄົນຕາຍແລ້ວຢູ່ໃນສະພາບທີ່ນອນຫຼັບຢູ່ ແລະ ບໍ່ຮູ້ສຶກຫຍັງເລີຍ. ຄົນຕາຍນອນ ຢູ່ທີ່ນັ້ນ ບໍ່ນັບມື້ນັບປີ, ແຕ່ເມື່ອພວກເຂົາຖືກຍຸກເອີ້ນໃຫ້ຕື່ນຂຶ້ນມາ ພວກເຂົາຈະຮູ້ສຶກວ່າ ຕົນເອງໄດ້ ນອນຫຼັບໄປບໍ່ຮອດນາທີໜຶ່ງ."[4] {GC 549.2}

ໃນພຣະຄຳພີບໍ່ມີຂໍ້ຄວາມໃດທີ່ກ່າວວ່າ ເມື່ອຕາຍແລ້ວຄົນຊອບທຳຈະໄດ້ຮັບລາງວັນທັນທີ ຫຼື ຄົນຊົ່ວ ຈະຖືກລົງໂທດໃນທັນທີ. ລຸ້ນບັນພະຊົນ ແລະ ຜູ້ເຜີຍພຣະທຳກໍບໍ່ໄດ້ໃຫ້ຄຳຮັບປະກັນແນວນັ້ນ. ພຣະຄຣິສ ແລະ ພວກອັກຄະສາວົກຂອງພຣະອົງກໍບໍ່ໄດ້ບົ່ງບອກເຖິງເລື່ອງນີ້ແຕ່ຢ່າງໃດ. ພຣະຄຳພີ

[3] ອີ. ເປຕາແວນ (E. Petavel), *ບັນຫາເລື່ອງຄວາມເປັນອະມະຕະ*, ໜ້າ 255.

[4] ມາຕິນ ລູເທີ (Martin Luther), *Exposition of Solomon's Booke Called Ecclesiastes*, ໜ້າ 152.

ສອນຢ່າງຈະແຈ້ງວ່າ ຄົນຕາຍບໍ່ໄດ້ໄປສະຫວັນທັນທີ ແຕ່ຢູ່ໃນສະພາບເໝືອນຄົນນອນຫຼັບ ຈົນ ກວ່າຈະເຖິງວັນຟື້ນຄືນຊີບ. (ເບິ່ງ 1 ເທສະໂລນີກ 4:14; ໂຢບ 14:10–12). ໃນມື້ທີ່ “ສາຍ ສ້ອຍເງິນແຫ່ງຊີວິດ . . . ຂາດ ແລະ ຕະກຽງຄຳກໍ . . . ຕົກລົງ ແລະ ຫັກ”[5] ຄວາມຄິດຂອງມະນຸດ ກໍດັບສູນໄປ. (ປັນຍາຈານ 12:6). ຜູ້ທີ່ລົງໄປສູ່ຂຸມຝັງສົບກໍມິດງຽບ ແລະ ບໍ່ຮັບຮູ້ເຖິງສິ່ງໃດທີ່ ເກີດຂຶ້ນພາຍໃຕ້ດວງຕາເວັນອີກຕໍ່ໄປ. (ເບິ່ງ ໂຢບ 14:21). ນັ້ນເປັນເວລາແຫ່ງພຣະພອນທີ່ຄົນ ຊອບທຳຈະໄດ້ພັກຜ່ອນ. ສຳລັບພວກເຂົາບໍ່ວ່າເວລາຈະດົນນານປານໃດ ກໍຮູ້ສຶກເປັນພຽງຊົ່ວຂະນະ ໜຶ່ງເທົ່ານັ້ນ. ພວກເຂົານອນຫຼັບ ແລະ ຈະຖືກປຸກໃຫ້ຕື່ນ ໂດຍສຽງແກຂອງພຣະເຈົ້າ, ແລະຈະເປັນ ຄືນມາສູ່ສະຫງ່າຣາສີແຫ່ງຊີວິດອະມະຕະ. “ສຽງແກຈະດັງຂຶ້ນ ຄົນຕາຍຈະຖືກບັນດານໃຫ້ເປັນຄືນມາ ແບບບໍ່ເປື່ອຍເນົ່າ . . . ເມື່ອສິ່ງທີ່ເປື່ອຍເນົ່າໄດ້ສວມໃສ່ສິ່ງທີ່ບໍ່ເປື່ອຍເນົ່າ ແລະ ສິ່ງທີ່ຕາຍເປັນສວມໃສ່ສິ່ງ ທີ່ຕາຍບໍ່ເປັນແລ້ວ ຄຳກ່າວທີ່ໄດ້ຂຽນໄວ້ກໍຈະມາເປັນຄວາມຈິງຄື: ‘ຄວາມຕາຍໄດ້ຖືກກືນເຂົ້າໄປໃນ ໄຊຊະນະແລ້ວ.’” (1 ໂກຣິນໂທ 15:52–54 LCV). ໃນຂະນະທີ່ຄົນຊອບທຳຖືກປຸກໃຫ້ຕື່ນຈາກການຫຼັບ ໄຫຼໃນຄວາມຕາຍ, ພວກເຂົາຈະເລີ່ມຄິດຕໍ່ຈາກສິ່ງສຸດທ້າຍ ແລະ ຄວາມຮູ້ສຶກເຈັບປວດເມື່ອຂາດລົມ ຫາຍໃຈ. ແຕ່ເມື່ອພົ້ນຈາກອຸບມຸງຝັງສົບແລ້ວ ຄວາມຄິດອັນຊົມຊື່ນຍິນດີຄັ້ງທຳອິດຂອງພວກເຂົາ ຈະ ສະທ້ອນກ້ອງໃນສຽງໂຮ່ຮ້ອງແຫ່ງໄຊຊະນະວ່າ: “ໂອ ຄວາມຕາຍ, ໄຊຊະນະຂອງເຈົ້າຢູ່ໃສ? ໂອ ຄວາມ ຕາຍ, ໄລພິດຂອງເຈົ້າຢູ່ໃສ?” (1 ໂກຣິນໂທ 15:55 LCV). *{GC 549.3}*

[5] ໝາຍເຖິງການເສຍຊີວິດ.

34

ວິນຍານຊົ່ວຫຼີ້ນບົດຄົນຕາຍ

ວິນຍານຜູ້ຫຼອກລວງ

ການປະຕິບັດໜ້າທີ່ຂອງເຫຼົ່າທູດສະຫວັນບໍຣິສຸດຕາມທີ່ຂຽນໄວ້ໃນພຣະຄຳພີ ເປັນຄວາມຈິງອັນລ້ຳຄ່າທີ່ໜູນໃຈຜູ້ຕິດຕາມພຣະຄຣິສທຸກຄົນ. ແຕ່ຄຳສອນໃນພຣະຄຳພີກ່ຽວກັບເລື່ອງນີ້ ໄດ້ຖືກບົດບັງ ແລະ ບິດເບືອນ ດ້ວຍຫຼັກສາສະໜາສາດທີ່ຜິດພ້ຽນໄປຈາກຄວາມຈິງ ເຊິ່ງເປັນທີ່ນິຍົມກັນຢ່າງກວ້າງຂວາງ. ຫຼັກຄຳສອນເລື່ອງ ມະນຸດມີສະພາບອະມະຕະໂດຍທຳມະຊາດ ເປັນແນວຄິດທີ່ຍືມມາຈາກປັດຊະຍາຂອງຄົນທີ່ບໍ່ນັບຖືພຣະເຈົ້າ ແລະ ໄດ້ຖືກນຳມາເປັນສ່ວນໜຶ່ງຂອງຄວາມເຊື່ອຄຣິສຕຽນ ໃນຊ່ວງການປະຖິ້ມຄວາມເຊື່ອຄັ້ງຍິ່ງໃຫຍ່ນັ້ນ. ຄຳສອນນີ້ໄດ້ເຂົ້າມາແທນທີ່ຄວາມຈິງທີ່ພຣະຄຳພີສອນໄວ້ຢ່າງຈະແຈ້ງວ່າ “ຜູ້ທີ່ຕາຍໄປແລ້ວກໍບໍ່ຮູ້ຫຍັງເລີຍ.” (ປັນຍາຈານ 9:5). ຫຼາຍຄົນເຂົ້າໃຈຜິດວ່າ ວິນຍານຂອງຄົນຕາຍເປັນ “ວິນຍານຮັບໃຊ້ ທີ່ພຣະເຈົ້າຊົງໃຊ້ມາບົວລະບັດບັນດາຜູ້ທີ່ຈະໄດ້ຮັບຄວາມລອດພົ້ນເປັນມໍລະດົກ.” (ເຮັບເຣີ 1:14). ພວກເຂົາເຊື່ອຢ່າງນີ້ ແມ່ນວ່າຈະຂັດກັບພຣະຄຳພີທີ່ກ່າວເຖິງການມີຕົວຕົນຂອງທູດສະຫວັນ ທີ່ເຊື່ອມໂຍງກັບປະຫວັດສາດຂອງມະນຸດ ກ່ອນທີ່ຈະມີການຕາຍຂອງມະນຸດເກີດຂຶ້ນ. *{GC 551.1}*

ຄຳສອນຜິດທີ່ວ່າ ມະນຸດຍັງມີສະຕິຢູ່ຫຼັງຈາກທີ່ຕາຍແລ້ວ ໂດຍສະເພາະຄວາມເຊື່ອຜິດທີ່ວ່າ ວິນຍານຂອງຄົນຕາຍກັບມາຊ່ວຍເຫຼືອຄົນເປັນນັ້ນ ເປັນຄຳສອນທີ່ໄດ້ກຽມທາງໄວ້ສຳລັບການຕິດຕໍ່ພົວພັນກັບວິນຍານໃນຍຸກປັດຈຸບັນ. ຖ້າຄົນຕາຍໄດ້ເຂົ້າເຝົ້າພຣະເຈົ້າ ແລະ ຢູ່ຕໍ່ໜ້າເຫຼົ່າທູດສະຫວັນບໍຣິສຸດ ທັງໄດ້ຮັບຄວາມຮູ້ທີ່ເໜືອກວ່າຄວາມຮູ້ເດີມນັ້ນ, ເປັນຫຍັງພວກເຂົາຈຶ່ງບໍ່ກັບມາ ເພື່ອໃຫ້ຄວາມສະຫວ່າງ ແລະ ສັ່ງສອນຄົນເປັນ? ຖ້າວິນຍານຂອງຄົນຕາຍລອຍວົນວຸ້ນອ້ອມຮອບໝູ່ເພື່ອນໃນໂລກ ຕາມທີ່ນັກສາສະໜາສາດທົ່ວໄປໄດ້ສອນໄວ້, ເປັນຫຍັງຈຶ່ງບໍ່ອະນຸຍາດໃຫ້ພວກເຂົາສື່ສານກັບຄົນເປັນ ເພື່ອເຕືອນເລື່ອງອັນຕະລາຍ ຫຼື ໃຫ້ກຳລັງໃຈໃນຍາມໂສກເສົ້າ? ຜູ້ທີ່ເຊື່ອວ່າມະນຸດມີສະຕິຫຼັງຈາກຕາຍຈະປະຕິເສດໄດ້ແນວໃດ ຖ້າມີວິນຍານອ້າງວ່າໄດ້ຂຶ້ນສະຫວັນ ແລະ ກຳລັງນຳແສງສະຫວ່າງຈາກພຣະເຈົ້າມາສູ່ຕົນ? ນີ້ແຫຼະຄືຊ່ອງທາງທີ່ຜູ້ຄົນຖືວ່າສັກສິດ ແຕ່ແທ້ຈິງກັບເປັນຊ່ອງທາງທີ່ຊາຕານໃຊ້ເພື່ອບັນລຸຈຸດປະສົງຂອງມັນ. ພວກທູດຂອງຊາຕານທີ່ຕົກຈາກສະຫວັນໄດ້ເຮັດຕາມຄຳສັ່ງຂອງມັນ ໂດຍປາກົດຕົວເປັນຜູ້ນຳຂ່າວຈາກໂລກວິນຍານ. ໃນຂະນະທີ່ອ້າງວ່າ ກຳລັງພາຄົນເປັນໃຫ້ຕິດຕໍ່ກັບຄົນຕາຍຢູ່ນັ້ນ, ເຈົ້າແຫ່ງຄວາມຊົ່ວກໍໃຊ້ພະລັງມົນສະກົດ ເພື່ອຄອບງຳຈິດໃຈຂອງພວກເຂົາ. *{GC 551.2}*

ຊາຕານມີອຳນາດສ້າງພາບລວງຕາໃຫ້ມະນຸດເຫັນເໝືອນວ່າ ໝູ່ເພື່ອນທີ່ຕາຍໄປແລ້ວມາປາກົດຕໍ່ໜ້າພວກເຂົາ. ການປອມແປງນັ້ນຄົບຖ້ວນສົມບູນ; ໜ້າຕາ, ຄຳເວົ້າ ແລະ ນ້ຳສຽງ ລ້ວນແຕ່ຖືກສ້າງ

ຂຶ້ນມາຄືກັນກັບຂອງແທ້ທຸກປະການ. ຫຼາຍຄົນໄດ້ຮັບການປອບໃຈ ເມື່ອເຊື່ອວ່າຄົນທີ່ຕົນຮັກກຳລັງມີຄວາມສຸກຢູ່ໃນສະຫວັນ; ພວກເຂົາຈຶ່ງເປີດຫູຟັງ “ວິນຍານຫຼອກລວງ ແລະ ສິ່ງຕ່າງໆ ທີ່ສອນໂດຍພວກຜີມານຮ້າຍ” ໂດຍບໍ່ຮູ້ເຖິງອັນຕະລາຍ. (1 ຕີໂມທຽວ 4:1 LCV). {GC 552.1}

ເມື່ອພວກເຂົາຖືກຫຼອກໃຫ້ເຊື່ອວ່າ ຄົນຕາຍສາມາດກັບມາສື່ສານກັບພວກເຂົາໄດ້ແທ້, ຊາຕານໃຫ້ວິນຍານຊົ່ວປາກົດຕົວ ແລະ ເຮັດຄືຜູ້ທີ່ຕາຍໄປແລ້ວ ໂດຍຜູ້ຕາຍນັ້ນໄດ້ເສຍຊີວິດລົງໃນຂະນະທີ່ບໍ່ມີຄວາມພ້ອມ. ວິນຍານສວມຮອຍເຫຼົ່ານັ້ນອ້າງວ່າ ມີຄວາມສຸກໃນສະຫວັນ ແລະ ຍັງໄດ້ຮັບຕຳແໜ່ງສູງສົ່ງຢູ່ທີ່ນັ້ນ. ດ້ວຍເຫດນີ້, ມີຄົນຫຼົງເຊື່ອຢ່າງຫຼວງຫຼາຍວ່າ ບໍ່ມີຄວາມແຕກຕ່າງລະຫວ່າງຄົນຊອບທຳກັບຄົນອະທຳ. ບາງຄັ້ງຜູ້ທີ່ອ້າງວ່າມາຈາກໂລກວິນຍານ ກໍເວົ້າເຕືອນເລື່ອງຕ່າງໆ ທີ່ກາຍເປັນຄວາມຈິງ. ຫຼັງຈາກທີ່ມີຄົນຫຼົງເຊື່ອມັນແລ້ວ ມັນກໍສະເໜີຄຳສອນທີ່ຂັດຕໍ່ຄວາມເຊື່ອໃນພຣະຄຳພີໂດຍກົງ. ພວກມັນທຳທ່າເປັນຫ່ວງຕໍ່ຄວາມຢູ່ດີມີສຸກຂອງໝູ່ເພື່ອນໃນໂລກ ແລ້ວກໍແຊກຊຶມຄຳສອນທີ່ອັນຕະລາຍທີ່ສຸດເຂົ້າມາ. ການທີ່ພວກມັນເວົ້າຄວາມຈິງບາງຢ່າງ ແລະ ບາງຄັ້ງສາມາດທຳນວາຍເຫດການໃນອະນາຄົດໄດ້ນັ້ນ ເຮັດໃຫ້ຄຳເວົ້າຂອງພວກມັນເບິ່ງຄືມີຄວາມໜ້າເຊື່ອຖື. ສະນັ້ນ, ຄົນຈຳນວນຫຼວງຫຼາຍຈຶ່ງຮັບເອົາ ແລະ ເຊື່ອຖືຄຳສອນທີ່ບໍ່ຖືກຕ້ອງຂອງພວກມັນ ຄືກັບວ່າມັນເປັນຄວາມຈິງອັນສັກສິດທີ່ສຸດຈາກພຣະຄຳພີ. ດ້ວຍເຫດນີ້, ຜູ້ຄົນຈຶ່ງປະຖິ້ມພຣະບັນຍັດຂອງພຣະເຈົ້າ, ດູໝິ່ນພຣະວິນຍານແຫ່ງພຣະຄຸນ ແລະ ເບິ່ງພຣະໂລຫິດແຫ່ງພັນທະສັນຍາວ່າເປັນສິ່ງທຳມະດາທີ່ບໍ່ສັກສິດ. ພວກວິນຍານເຫຼົ່ານັ້ນບໍ່ຍອມຮັບວ່າພຣະຄຣິສຊົງເປັນພຣະເຈົ້າ ແລະ ສອນວ່າພຣະຜູ້ສ້າງຢູ່ໃນລະດັບດຽວກັນກັບພວກມັນ. ສະນັ້ນ, ພາຍໃຕ້ການປອມຕົວແບບໃໝ່ນີ້ ຊາຕານຈຶ່ງສືບຕໍ່ການກະບົດ ແລະ ເຮັດສົງຄາມຕໍ່ສູ້ກັບພຣະເຈົ້າ ເຊິ່ງເລີ່ມຕົ້ນໃນສະຫວັນ ແລະ ດຳເນີນມາໃນໂລກເປັນເວລາເກືອບຫົກພັນປີແລ້ວ. {GC 552.2}

ຫຼາຍຄົນພະຍາຍາມອະທິບາຍປາກົດການທາງວິນຍານ ໂດຍອ້າງວ່າມັນເປັນການຫຼອກລວງ ແລະ ກົນອຸບາຍຂອງພວກໝໍຜີ ແລະ ນາງທຽມເທົ່ານັ້ນ. ເຖິງແມ່ນວ່າ ມີຫຼາຍກໍລະນີທີ່ໃຊ້ມາຍາກົນ ແລະ ອ້າງວ່າເປັນປາກົດການຈິງ, ແຕ່ກໍມີກໍລະນີທີ່ເປັນການສະແດງຣິດອຳນາດເໜືອທຳມະຊາດທີ່ເຫັນໄດ້ຢ່າງຈະແຈ້ງ. ສຽງເຄາะອັນເລິກລັບໃນປີ 1848 ອັນເປັນຈຸດເລີ່ມຕົ້ນຂອງລັດທິຕິດຕໍ່ວິນຍານໃນຍຸກໃໝ່ນັ້ນ ບໍ່ໄດ້ມາຈາກກົນອຸບາຍ ຫຼື ການຫຼອກລວງຂອງມະນຸດ ແຕ່ເປັນການກະທຳໂດຍກົງຂອງເຫຼົ່າທູດຊົ່ວຮ້າຍຂອງຊາຕານ. ນີ້ແມ່ນໜຶ່ງໃນການຫຼອກລວງທີ່ມີປະສິດທິພາບໃນການທຳລາຍຈິດວິນຍານຫຼາຍທີ່ສຸດ. ຫຼາຍຄົນຈະຕິດກັບດັກຂອງຊາຕານ ເພາะເຊື່ອວ່າລັດທິຕິດຕໍ່ວິນຍານເປັນພຽງມາຍາກົນຂອງມະນຸດ. ແຕ່ເມື່ອພວກເຂົາໄດ້ເຫັນປາກົດການທີ່ຕ້ອງຍອມຮັບວ່າເປັນສິ່ງທີ່ເໜືອທຳມະຊາດ ພວກເຂົາກໍຫຼົງເຊື່ອ ແລະ ຖືກຫຼອກໃຫ້ຍອມຮັບວ່າສິ່ງເຫຼົ່ານີ້ເປັນຣິດອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າ. {GC 553.1}

ຄົນເຫຼົ່ານີ້ບໍ່ໄດ້ໃສ່ໃຈໃນຄຳສອນຂອງພຣະຄຳພີ ກ່ຽວກັບການອັດສະຈັນທີ່ຊາຕານ ແລະ ທູດຂອງມັນໄດ້ກະທຳ. ພວກໝໍເວດມົນຄາຖາຂອງກະສັດຟາໂຣ ສາມາດປອມແປງວຽກງານຂອງພຣະເຈົ້າໄດ້ ດ້ວຍການຊ່ວຍເຫຼືອຂອງຊາຕານ. ອາຈານໂປໂລໄດ້ກ່າວເຖິງການສະແດງຣິດອຳນາດຂອງຊາຕານແບບດຽວກັນນີ້ ເຊິ່ງຈະເກີດຂຶ້ນກ່ອນການສະເດັດມາຄັ້ງທີສອງຂອງພຣະຄຣິສວ່າ: “ໂດຍອຳນາດຂອງຊາຕານ, ມັນຈະໃຊ້ການສະແດງອຳນາດທຸກຮູບແບບ ຜ່ານທາງໝາຍສຳຄັນ ແລະ ການອັດສະຈັນ ເຊິ່ງລ້ວນແຕ່ຮັບໃຊ້ຄວາມຕົວະ ແລະ ໃຊ້ຄວາມຊົ່ວຮ້າຍທຸກຢ່າງຫຼອກລວງ.” (2 ເທສະໂລນິກ 2:9, 10 LCV). ສ່ວນອັກຄະສາວົກໂຢຮັນ ເມື່ອບັນລະຍາຍເຖິງຣິດອຳນາດທີ່ຈະປາກົດໃນຍຸກສຸດທ້າຍໃນຮູບແບບການອັດສະຈັນ, ເພີ່ນໄດ້ກ່າວວ່າ: “ມັນສະແດງໝາຍສຳຄັນທີ່ຍິ່ງໃຫຍ່, ແມ່ນແຕ່ເຮັດໃຫ້

ໄຟຕົກຈາກສະຫວັນລົງມາສູ່ໂລກຕໍ່ໜ້າຕໍ່ຕາມະນຸດ. ເພາະໝາຍສຳຄັນເຫຼົ່ານີ້ມັນຈິ່ງ . . . ຫຼອກລວງຄົນທັງຫຼາຍທີ່ຢູ່ໃນແຜ່ນດິນໂລກ.” (ພຣະນິມິດ 13:13, 14 LCV). ສິ່ງທີ່ທຳນວາຍໄວ້ນີ້ບໍ່ແມ່ນການໃຊ້ມາຍາກົນຫຼອກຕາ, ແຕ່ຈະມີຄົນຖືກຫຼອກລວງດ້ວຍການອັດສະຈັນທີ່ຜູ້ຮັບໃຊ້ຂອງຊາຕານມີອຳນາດເຮັດໄດ້ແທ້. {GC 553.2}

ຊາຕານລໍ້ລວງປັນຍາຊົນ

ເຈົ້າແຫ່ງຄວາມມືດໄດ້ໃຊ້ຄວາມສາມາດອັນຊານສະຫຼາດຂອງມັນໃນການຫຼອກລວງມາເປັນເວລາດົນນານ. ດ້ວຍຄວາມຊ່ຽວຊານ, ມັນປັບປ່ຽນການລໍ້ລວງໃຫ້ເໝາະສົມກັບຄົນທຸກຊົນຊັ້ນ ແລະ ທຸກສະພາບການ. ສຳລັບຜູ້ທີ່ມີການສຶກສາ ແລະ ໄດ້ຍົກລະດັບການເປັນຢູ່, ມັນນຳສະເໜີເລື່ອງການຕິດຕໍ່ກັບວິນຍານໃນຮູບແບບທີ່ເລິກເຊິ່ງ ແລະ ມີເຫດຜົນທາງປັນຍາ ຈົນສາມາດຫຼອກລໍ້ຫຼາຍຄົນເຂົ້າໄປຕິດກັບດັກຂອງມັນ. ປັນຍາທີ່ວິນຍານເຫຼົ່ານັ້ນສອນກົງກັບທີ່ອັກຄະສາວົກຢາໂກໂບໄດ້ກ່າວໄວ້ວ່າ “ປັນຍາຢ່າງນີ້ບໍ່ໄດ້ມາຈາກເບື້ອງເທິງ ແຕ່ເປັນປັນຍາຂອງຝ່າຍໂລກນີ້, ເປັນຢ່າງທຳມະດາມະນຸດ ແລະ ເປັນຢ່າງມານຮ້າຍ.” (ຢາໂກໂບ 3:15). ເຖິງຢ່າງໃດກໍຕາມ, ຊາຕານຈະອຳພາງເລື່ອງດັ່ງກ່າວໄວ້ ເມື່ອການອຳພາງເໝາະສົມກັບຈຸດປະສົງຂອງມັນ. ຜູ້ທີ່ສາມາດປາກົດຕົວຕໍ່ພຣະຄຣິສໃນຖິ່ນແຫ້ງແລ້ງກັນດານ ດ້ວຍແສງຣັດສະໝີຂອງເຫຼົ່າເສຣາຟິມນັ້ນ ກໍມາຫາມະນຸດໃນຮູບແບບທີ່ດຶງດູດໃຈທີ່ສຸດ ໃນຖານະທູດແຫ່ງຄວາມສະຫວ່າງ. ມັນເຂົ້າເຖິງຄວາມຄິດດ້ວຍການນຳສະເໜີຫົວຂໍ້ທີ່ຍົກລະດັບຈິດໃຈ ແລະ ເຮັດໃຫ້ຈິນຕະນາການເພີ່ມເພີ່ນໄປກັບພາບທີ່ໜ້າຫຼົງໄຫຼ. ມັນລໍ້ລວງຄົນດ້ວຍການບັນລະຍາຍຢ່າງຄ່ອງແຄ້ວໜ້າຟັງເຖິງເລື່ອງຄວາມຮັກ ແລະ ການເສຍສະຫຼະ. ມັນກະຕຸ້ນໃຫ້ຄວາມຄິດຝັນລ່ອງລອຍ ເຮັດໃຫ້ຄົນເກີດຄວາມພາກພູມໃຈໃນປັນຍາຂອງຕົນເອງຫຼາຍ ຈົນພວກເຂົາໝິ່ນປະໝາດພຣະເຈົ້າອົງນິຣັນ. ຊາຕານມີຣິດອຳນາດ, ມັນເຄີຍນຳພາພຣະຜູ້ໃຫ່ຂອງໂລກຂຶ້ນໄປເທິງຈອມພູສູງ ແລະ ສະແດງໃຫ້ພຣະອົງເຫັນອານາຈັກ ແລະ ຄວາມຮຸ່ງເຮືອງທັງໝົດຂອງໂລກ. ທຸກຄົນທີ່ບໍ່ໄດ້ຮັບການປົກປ້ອງດ້ວຍຣິດອຳນາດຂອງພຣະເຈົ້າຈະຖືກຊາຕານລໍ້ລວງໃນລັກສະນະທີ່ຈະເຮັດໃຫ້ການຮັບຮູ້ຜິດພ້ຽນໄປ. {GC 553.3}

ຊາຕານລໍ້ລວງມະນຸດໃນປັດຈຸບັນນີ້ ເໝືອນດັ່ງທີ່ມັນໄດ້ລໍ້ລວງນາງເອວາໃນສວນເອເດນດ້ວຍການຍົກຍໍປໍປັ້ນ ແລະ ການຍົວະໃຫ້ເກີດຄວາມປາຖະໜາຢາກຮູ້ສິ່ງທີ່ພຣະເຈົ້າຊົງຫ້າມ ພ້ອມທັງກະຕຸ້ນໃຫ້ເກີດຄວາມທະເຍີທະຍານທີ່ຈະໄດ້ຮັບການເຊີດຊູ. ຕົວຊາຕານເອງໄດ້ຕົກສູ່ຄວາມບາບ ດ້ວຍການຫຼົ່ລ້ຽງຄວາມຊົ່ວຮ້າຍເຫຼົ່ານີ້ ແລະ ມັນກໍໃຊ້ສິ່ງດຽວກັນນີ້ເພື່ອນຳຄວາມພິນາດມາສູ່ມະນຸດ. ມັນກ່າວວ່າ: “ເຈົ້າກໍຈະເປັນເໝືອນພຣະເຈົ້າ . . . ຈະຮູ້ຈັກຄວາມດີ ແລະ ຮູ້ຈັກຄວາມຊົ່ວ.” (ປະຖົມມະການ 3:5). ລັດທິຕິດຕໍ່ກັບວິນຍານສອນວ່າ “ມະນຸດເປັນຜູ້ທີ່ມີການພັດທະນາ, ຕັ້ງແຕ່ເກີດຈົນຕະຫຼອດໄປເປັນນິດ ມະນຸດມີຈຸດໝາຍທີ່ຈະພັດທະນາໄປສູ່ການເປັນພຣະເຈົ້າ.” ແລະຍັງສອນຕື່ມວ່າ: “ທຸກຄົນຈະພິພາກສາຕົນເອງເທົ່ານັ້ນ ບໍ່ແມ່ນຄົນອື່ນ.” “ການພິພາກສານັ້ນຈະຖືກຕ້ອງ ເພາະເປັນການພິພາກສາຕົນເອງ . . . ບັນລັງນັ້ນຢູ່ພາຍໃນຕົວທ່ານ.” ເມື່ອຈິດຂອງຄູອາຈານສອນລັດທິຕິດຕໍ່ກັບວິນຍານຄົນໜຶ່ງໄດ້ຕື່ນຂຶ້ນ ລາວເວົ້າວ່າ: “ເພື່ອນມະນຸດທັງຫຼາຍ, ພວກເຮົາທຸກຄົນລ້ວນແຕ່ເປັນເທບພະເຈົ້າທີ່ບໍ່ເຄີຍເຮັດບາບ.” ມີອີກຄົນໜຶ່ງປະກາດວ່າ: “ທຸກຄົນທີ່ຊອບທຳ ແລະ ດີພ້ອມນັ້ນກໍເປັນພຣະຄຣິສ.” {GC 554.1}

ຜູ້ທີ່ຄວນໄດ້ຮັບຄວາມຮັກ ແລະ ການເຊີດຊູແມ່ນພຣະເຈົ້າອົງຜູ້ຊອບທຳ ຜູ້ຊົ່ງຣິດທານຸພາບສູງສຸດ; ມາດຕະຖານອັນແທ້ຈິງຂອງມະນຸດ ແມ່ນຄວາມຊອບທຳອັນສົມບູນແຫ່ງພຣະບັນຍັດຂອງ

ພຣະອົງ. ແຕ່ຊາຕານໄດ້ນຳເອົາທຳມະຊາດອັນບາບໜາ ແລະ ຜິດພາດຂອງມະນຸດມາເປັນສິ່ງດຶງດູດທີ່ຄວນເຊີດຊູ, ເປັນກົດເກນດຶງດູດໃນການພິຈາລະນາ ແລະ ເປັນມາດຕະຖານພຶງອັນດຶງດູດຂອງອຸປະນິໄສ. ນີ້ແມ່ນການກ້າວໜ້າ ແຕ່ເປັນການກ້າວລົງ ບໍ່ແມ່ນການກ້າວຂຶ້ນ. *{GC 554.2}*

ກົດທຳມະຊາດອັນໜຶ່ງທີ່ກ່ຽວຂ້ອງກັບທັງດ້ານສະຕິປັນຍາ ແລະ ດ້ານຈິດວິນຍານຄື: ຄົນເຮົາຈະຖືກປ່ຽນແປງໃຫ້ເໝືອນສິ່ງທີ່ເຮົາເຝົ້າເບິ່ງຢູ່; ຈິດໃຈຂອງເຮົາຈະຄ່ອຍ ໆ ປ່ຽນໄປຕາມສິ່ງທີ່ເຮົາເອົາມາຄິດເປັນປະຈຳ; ມັນຈະປັບປ່ຽນໄປຕາມສິ່ງທີ່ຕົນຮັກ ແລະ ນັບຖື. ມະນຸດຈະບໍ່ສາມາດຂຶ້ນສູງໄປກວ່າມາດຕະຖານຄວາມບໍຣິສຸດ, ຄວາມດີ ຫຼື ຄວາມຈິງທີ່ຕົນວາງໄວ້. ຖ້າຜູ້ໃດເອົາຄວາມຄິດຕົວເອງເປັນອຸດົມຄະຕິສູງສຸດ, ເຂົາກໍຈະບໍ່ມີວັນກ້າວໄປສູງກວ່ານັ້ນ. ກົງກັນຂ້າມ, ເຂົາຈະຈົມຕ່ຳລົງເລື້ອຍ ໆ. ມີແຕ່ພຣະຄຸນຂອງພຣະເຈົ້າເທົ່ານັ້ນທີ່ສາມາດຍົກມະນຸດຂຶ້ນໄດ້. ຖ້າປະໄວ້ຕາມລຳພັງ, ຊີວິດຄົນເຮົາຈະຕົກຕ່ຳລົງຢ່າງຫຼີກລ່ຽງບໍ່ໄດ້. *{GC 555.1}*

ຖືກລໍ້ດ້ວຍຄວາມມ່ວນຊື່ນ

ລັດທິຕິດຕໍ່ກັບວິນຍານສະແດງຕົວໃນຮູບແບບທີ່ອ້ອມຄ້ອມ ແລະ ຊັບຊ້ອນຕໍ່ຄົນທີ່ມີການສຶກສາ ແລະ ປັນຍາຊົນ. ແຕ່ສຳລັບຄົນທີ່ເຫັນແກ່ຕົວ, ຄົນທີ່ມັກຄວາມມ່ວນຊື່ນ ແລະ ຄົນທີ່ຫຼົງໄຫຼທາງການາລົມ ມັນສະແດງຕົວໃນຮູບແບບທີ່ເຫັນໄດ້ຊັດເຈນ ເຊິ່ງກົງກັບກິເລດຕັນຫາຂອງພວກເຂົາ. ຊາຕານສຶກສາຈຸດອ່ອນທຸກຢ່າງຂອງມະນຸດ, ມັນສັງເກດເບິ່ງບາບທີ່ແຕ່ລະຄົນມັກຈະເຮັດ, ແລ້ວມັນກໍຈັດຫາໂອກາດໃຫ້ພວກເຂົາເຮັດຕາມຄວາມໂນ້ມອ່ຽງທີ່ຊົ່ວຮ້າຍນັ້ນ. ມັນລໍ້ລວງໃຫ້ມະນຸດເຮັດສິ່ງທີ່ຖືກຕ້ອງເກີນຂອບເຂດທີ່ເໝາະສົມ ເຮັດໃຫ້ພວກເຂົາອ່ອນແອທັງດ້ານຮ່າງກາຍ, ຈິດໃຈ ແລະ ສິນທຳ ຍ້ອນການບໍ່ຮູ້ຈັກປະມານຕົນ. ມັນໄດ້ທຳລາຍຊີວິດຜູ້ຄົນຢ່າງຫຼວງຫຼາຍມາແລ້ວ ແລະ ກຳຍັງສືບຕໍ່ທຳລາຍ ດ້ວຍການຊັກນຳໃຫ້ພວກເຂົາ ປ່ອຍຕົວໃຫ້ຫຼົງລະເລີງໄປກັບກິເລດຕັນຫາ ຈົນເຮັດໃຫ້ສະພາບຄວາມເປັນມະນຸດຂອງພວກເຂົາຕົກຕ່ຳລົງຢ່າງກັບສັດເດລະສານ. ເພື່ອໃຫ້ແຜນການຂອງມັນສຳເລັດ ມັນປະກາດຜ່ານທາງວິນຍານເຫຼົ່ານັ້ນວ່າ "ຄວາມຮູ້ທີ່ແທ້ຈິງ ເຮັດໃຫ້ມະນຸດຢູ່ເໜືອກົດທັງປວງ," "ທຸກສິ່ງທຸກຢ່າງທີ່ເຮັດລົງໄປ ລ້ວນແຕ່ຖືກຕ້ອງ;" "ພຣະເຈົ້າບໍ່ລົງໂທດ," ແລະ "ບາບ*ທັງໝົດ*ທີ່ເຮັດລົງໄປ ລ້ວນແຕ່ບໍ່ມີຄວາມຜິດ." ເມື່ອຜູ້ຄົນຖືກຈູງໃຈໃຫ້ເຊື່ອວ່າຄວາມຕ້ອງການເປັນກົດສູງສຸດ, ເສລີພາບແມ່ນການເຮັດຕາມໃຈມັກ ແລະ ມະນຸດຕ້ອງຮັບຜິດຊອບຕໍ່ຕົນເອງພຽງຜູ້ດຽວເທົ່ານັ້ນ, ກຳບໍ່ໜ້າແປກໃຈທີ່ເຫັນຄວາມຊົ່ວຊ້າສາມານປາກົດຢູ່ທົ່ວທຸກຫົນແຫ່ງ. ຄົນຈຳນວນຫຼວງຫຼາຍພາກັນຮັບເອົາຄຳສອນທີ່ເປີດໂອກາດໃຫ້ພວກເຂົາເຮັດຕາມຄວາມຕ້ອງການຂອງຈິດໃຈຝ່າຍເນື້ອໜັງ. ແທນທີ່ຈະຄວບຄຸມຕົນເອງ ກຳກັບປ່ອຍໃຫ້ກິເລດຕັນຫາຄອບງຳ; ຄວາມຄິດຈິດໃຈ ແລະ ຈິດວິນຍານຖືກປ່ອຍໃຫ້ຢູ່ໃຕ້ອຳນາດຂອງລາຄະຕັນຫາ ແລ້ວຊາຕານກໍຊົມຊື່ນຍິນດີທີ່ມັນສາມາດຕ້ອນຄົນທີ່ອ້າງວ່າເປັນຜູ້ຕິດຕາມພຣະຄຣິສຈຳນວນຫຼາຍ ເຂົ້າໄປຕິດກັບດັກຂອງມັນ. *{GC 555.2}*

ບໍ່ມີຜູ້ໃດຈຳເປັນຕ້ອງຖືກຫຼອກລວງ ດ້ວຍຄຳອ້າງອັນບໍ່ຈິງຂອງລັດທິຕິດຕໍ່ກັບວິນຍານ. ພຣະເຈົ້າໄດ້ປະທານແສງສະຫວ່າງພຽງພໍໃຫ້ມະນຸດສາມາດຫຼີກລ່ຽງກັບດັກຂອງມັນ. ດັ່ງທີ່ໄດ້ກ່າວໄວ້ແລ້ວ ທິດສະດີທີ່ເປັນພື້ນຖານຂອງລັດທິຕິດຕໍ່ກັບວິນຍານນີ້ ຂັດແຍ້ງກັບຂໍ້ຄວາມທີ່ຊັດເຈນທີ່ສຸດໃນພຣະຄຳພີ. ພຣະ-ຄຳພີກ່າວວ່າ ຄົນຕາຍບໍ່ຮູ້ຫຍັງເລີຍ, ຄວາມຄິດຂອງພວກເຂົາໄດ້ດັບສູນໄປແລ້ວ. ພວກເຂົາບໍ່ມີສ່ວນຮ່ວມໃນສິ່ງໃດທີ່ເກີດຂຶ້ນພາຍໃຕ້ດວງອາທິດ ແລະ ບໍ່ຮູ້ຈັກຄວາມທຸກສຸກຂອງຜູ້ທີ່ພວກເຂົາຮັກທີ່ສຸດໃນໂລກ. (ເບິ່ງ ເພງສັນລະເສີນ 146:4; ປັນຍາຈານ 9:5–6; ໂຢບ 14:21). *{GC 556.1}*

ຊົງຫ້າມຕິດຕໍ່ກັບວິນຍານ

ນອກຈາກນັ້ນ, ພຣະເຈົ້າຊົງຫ້າມຢ່າງເດັດຂາດ ບໍ່ໃຫ້ມີການຕິດຕໍ່ກັບວິນຍານທີ່ອ້າງວ່າເປັນຄົນທີ່ຕາຍ. ໃນສະໄໝຊາວເຮັບເຣີບູຮານ, ມີຄົນກຸ່ມໜຶ່ງອ້າງວ່າສາມາດຕິດຕໍ່ກັບຄົນຕາຍໄດ້ ຄືກັນກັບບາງຄົນໃນປັດຈຸບັນ. ແຕ່ພຣະຄຳພີໄດ້ເປີດເຜີຍວ່າ ວິນຍານເຫຼົ່ານັ້ນ ເຊິ່ງເຊື່ອກັນວ່າເປັນວິນຍານຂອງຄົນຕາຍ ທີ່ມາຢ້ຽມຢາມຈາກໂລກອື່ນ ແທ້ຈິງແລ້ວແມ່ນ “ວິນຍານຂອງມານຮ້າຍ.”[1] ພຣະຄຳພີກ່າວວ່າ ການຕິດຕໍ່ກັບວິນຍານເຫຼົ່ານີ້ເປັນສິ່ງທີ່ໜ້າກຽດຊັງສຳລັບພຣະເຈົ້າ ແລະ ຖືກຫ້າມຢ່າງເດັດຂາດໂດຍມີໂທດເຖິງຕາຍ.[2] ຫຼາຍຄົນໃນປັດຈຸບັນດູໝິ່ນຄຳວ່າ “ໄສຍະສາດ.” ການອ້າງວ່າມະນຸດສາມາດຕິດຕໍ່ກັບວິນຍານຊົ່ວໄດ້ ຖືວ່າເປັນນິທານຈາກສະໄໝຍຸກມືດ. ແຕ່ລັດທິຕິດຕໍ່ກັບວິນຍານໄດ້ແຜ່ຂະຫຍາຍໄປທົ່ວ ຈົນມີຜູ້ມາເຊື່ອນັບແສນນັບລ້ານຄົນ. ມັນໄດ້ເຂົ້າໄປສູ່ວົງການວິທະຍາສາດ, ແຊກຊຶມເຂົ້າໄປໃນຄຣິສຕະຈັກຕ່າງໆ, ໄດ້ຮັບການຍອມຮັບໃນສະພານິຕິບັນຍັດ ແລະ ແມ່ນແຕ່ໃນຣາຊສຳນັກ. ການຫຼອກລວງອັນຍິ່ງໃຫຍ່ນີ້ ບໍ່ແມ່ນສິ່ງອື່ນໃດນອກຈາກການຟື້ນຟູໄສຍະສາດບູຮານໃນຮູບແບບໃໝ່ ເຊິ່ງພຣະຄຳພີໄດ້ປະນາມ ແລະ ຫ້າມໄວ້. *{GC 556.2}*

ຖ້າສົມມຸດວ່າ ບໍ່ມີຫຼັກຖານອື່ນກ່ຽວກັບລັກສະນະທີ່ແທ້ຈິງຂອງຄຳສອນເລື່ອງການຕິດຕໍ່ກັບວິນຍານ, ແຕ່ສຳລັບຄຣິສຕຽນແລ້ວ ການທີ່ວິນຍານເຫຼົ່ານັ້ນບໍ່ໄດ້ແບ່ງແຍກຄວາມແຕກຕ່າງລະຫວ່າງຄວາມຊອບທຳກັບຄວາມບາບ, ລະຫວ່າງອັກຄະສາວົກຜູ້ບໍຣິສຸດ ແລະ ສູງສົ່ງທີ່ສຸດຂອງພຣະຄຣິສ ກັບຜູ້ຮັບໃຊ້ທີ່ຊົ່ວຮ້າຍທີ່ສຸດຂອງຊາຕານ ກໍເປັນເຫດຜົນພຽງພໍແລ້ວທີ່ຈະປະຕິເສດ. ເມື່ອຊາຕານຫຼອກໃຫ້ຄົນເຊື່ອວ່າ ຄົນຊົ່ວຮ້າຍທີ່ສຸດກໍຢູ່ໃນສະຫວັນ ແລະ ໄດ້ຮັບການຍົກຍ້ອງສັນລະເສີນຢ່າງສູງ, ມັນກໍເວົ້າກັບຊາວໂລກວ່າ: “ບໍ່ວ່າເຈົ້າຈະຊົ່ວຮ້າຍປານໃດ, ບໍ່ວ່າເຈົ້າຈະເຊື່ອ ຫຼື ບໍ່ເຊື່ອໃນພຣະເຈົ້າ ແລະ ໃນພຣະຄຳພີ, ກໍໃຫ້ເຈົ້າໃຊ້ຊີວິດຕາມໃຈມັກສາ ເພາະສະຫວັນກໍເປັນບ້ານຂອງເຈົ້າຢູ່ແລ້ວ.” ຄົນທັງຫຼາຍທີ່ສອນເລື່ອງການຕິດຕໍ່ກັບວິນຍານກໍເທົ່າກັບປະກາດວ່າ: “‘ທຸກຄົນທີ່ເຮັດຊົ່ວລ້ວນແຕ່ເປັນຄົນດີ ພຣະອົງກໍເຫັນດີນຳພວກເຂົາ’ ຫຼື . . . ຖາມວ່າ, ‘ພຣະເຈົ້າອົງຊົງຕັດສິນນັ້ນຢູ່ໃສ?’” (ມາລາກີ 2:17). ພຣະຄຳຂອງພຣະເຈົ້າຂຽນໄວ້ວ່າ: “ວິບັດແກ່ຜູ້ທີ່ເອີ້ນຊົ່ວວ່າດີ ແລະ ເອີ້ນດີວ່າຊົ່ວ, ຜູ້ເອີ້ນມືດວ່າແຈ້ງ ແລະ ບ່ອນແຈ້ງພັດວ່າມືດ.” (ເອຊາຢາ 5:20 LCV). *{GC 556.3}*

ພຣະຄຳພີເປີດໂປງຊາຕານ

ວິນຍານຫຼອກລວງເຫຼົ່ານີ້ອ້າງວ່າເປັນອັກຄະສາວົກ ແຕ່ກັບກ່າວຂັດແຍ້ງກັບສິ່ງທີ່ພວກອັກຄະສາວົກໄດ້ຂຽນໄວ້ ພາຍໃຕ້ການຊົງນຳຂອງພຣະວິນຍານບໍຣິສຸດໃນຕອນທີ່ຍັງມີຊີວິດຢູ່. ພວກມັນປະຕິເສດວ່າພຣະຄຳພີມາຈາກພຣະເຈົ້າ ເຊິ່ງເປັນການທຳລາຍຮາກຖານແຫ່ງຄວາມຫວັງຂອງຄຣິສຕຽນ ແລະ ດັບແສງສະຫວ່າງທີ່ສ່ອງທາງໄປສູ່ສະຫວັນ. ຊາຕານກຳລັງເຮັດໃຫ້ມະນຸດເຊື່ອວ່າ ພຣະຄຳພີເປັນພຽງນິທານ ຫຼື ເປັນປຶ້ມສຳລັບຄົນໃນສະໄໝຕົ້ນເດີມ ເມື່ອມະນຸດຍັງບໍ່ພັດທະນາ; ສ່ວນບັດນີ້ກໍບໍ່ຄວນໃສ່ໃຈ ແຕ່ຄວນປະຖິ້ມໄປຍ້ອນວ່າມັນລ້າສະໄໝໄປແລ້ວ. ເພື່ອມາແທນທີ່ພຣະຄຳຂອງພຣະເຈົ້າ, ມັນຈຶ່ງໃຫ້ມີການປາກົດຂອງພວກວິນຍານໃຫ້ເຫັນ. ນີ້ແມ່ນຊ່ອງທາງທີ່ມັນຄວບຄຸມໄດ້ຢ່າງເຕັມທີ່. ດ້ວຍວິທີນີ້, ມັນເຮັດໃຫ້ຊາວໂລກເຊື່ອຕາມທີ່ມັນຢາກໃຫ້ເຊື່ອ. ປຶ້ມພຣະຄຳພີທີ່ຈະໃຊ້ໃນການພິພາກສາຕົວມັນເອງ ແລະ ຜູ້ຕິດຕາມຂອງມັນ ກໍເອົາໄວ້ບ່ອນມືດຕາມທີ່ມັນຕ້ອງການ ແລະ ມັນເຮັດໃຫ້ຄົນ

[1] ເບິ່ງ ຈົດບັນຊີ 25:1–3; ເພງສັນລະເສີນ 106:28; 1 ໂກຣິນໂທ 10:20; ພຣະນິມິດ 16:14.
[2] ເບິ່ງ ລະບຽບພວກເລວີ 19:31; 20:27.

ເບິ່ງພຣະຜູ້ຊ່ວຍໃຫ້ລອດຂອງໂລກ ເໝືອນເປັນພຽງຄົນທຳມະດາເທົ່ານັ້ນ. ໃນສະໄໝກ່ອນ, ທະຫານໂຣມທີ່ເຝົ້າອຸບມຸງຝັງພຣະສົບຂອງພຣະເຢຊູ ໄດ້ເລົ່າລືຄຳເວົ້າຕົວະທີ່ພວກປະໂຣຫິດ ແລະ ພວກເຖົ້າແກ່ໃສ່ປາກໃຫ້ເວົ້າ ເພື່ອປະຕິເສດການຟື້ນຄືນພຣະຊົນຂອງພຣະອົງ. ໃນສະໄໝນີ້, ພວກທີ່ເຊື່ອໃນການເຄື່ອນໄຫວຂອງເຫຼົ່າວິນຍານ ກຳພະຍາຍາມເຮັດໃຫ້ຄົນເຊື່ອວ່າ ບໍ່ມີເລື່ອງອັດສະຈັນໃດ ໆ ໃນຊີວິດຂອງພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ. ຫຼັງຈາກທີ່ພະຍາຍາມໃຫ້ພຣະເຢຊູຫຼຸດຄວາມສຳຄັນລົງແລ້ວ ພວກເຂົາກໍເອົາການອັດສະຈັນຂອງຝ່າຍຕົນເອງມາອວດອ້າງວ່າ ເໜືອກວ່າພຣະຣາຊກິດຂອງພຣະຄຣິສ. {GC 557.1}

ເປັນເລື່ອງຈິງທີ່ລັດທິຕິດຕໍ່ວິນຍານໃນປັດຈຸບັນກຳລັງປ່ຽນຮູບແບບຂອງມັນ ໂດຍປົກປິດລັກສະນະທີ່ໜ້າກຽດທີ່ສຸດຂອງມັນໄວ້ໃນຂະນະທີ່ອ້າງຄວາມເປັນຄຣິສຕຽນ. ແຕ່ຄຳເວົ້າຂອງມັນຈາກເວທີ ແລະ ສື່ຕ່າງ ໆ ໄດ້ປາກົດຕໍ່ສາທາລະນະຊົນມາຫຼາຍປີແລ້ວ ເຊິ່ງສະແດງໃຫ້ເຫັນລັກສະນະທີ່ແທ້ຈິງຂອງມັນ. ຄຳສອນເຫຼົ່ານີ້ບໍ່ສາມາດປະຕິເສດ ຫຼື ປິດບັງໄວ້ໄດ້. {GC 557.2}

ຄຳສອນເລື່ອງການຕິດຕໍ່ກັບວິນຍານໃນຮູບແບບປັດຈຸບັນ, ແທນທີ່ຈະໜ້າຍອມຮັບຫຼາຍກວ່າແຕ່ກ່ອນ ກຳກັບກາຍເປັນສິ່ງທີ່ອັນຕະລາຍກວ່າ ເພາະມັນແຝງການຫຼອກລວງຫຼາຍກວ່າເດີມ. ແຕ່ກ່ອນມັນເຄີຍປະຕິເສດພຣະຄຣິສ ແລະ ພຣະຄຳພີຢ່າງເປີດເຜີຍ, ແຕ່ດຽວນີ້ມັນ*ອ້າງວ່າ*ຍອມຮັບທັງສອງຢ່າງ. ເຖິງຢ່າງນັ້ນກໍຕາມ ພຣະຄຳພີຖືກຕີຄວາມໝາຍໃນແນວທາງທີ່ເອົາໃຈຄົນທີ່ຍັງບໍ່ໄດ້ກັບໃຈ, ໃນຂະນະທີ່ຄວາມຈິງອັນສຳຄັນທີ່ໃຫ້ຊີວິດຖືກລຶບລ້າງຈົນໝົດຄວາມໝາຍ. ມັນເນັ້ນຄວາມຮັກວ່າເປັນຄຸນລັກສະນະສູງສຸດຂອງພຣະເຈົ້າ, ແຕ່ກັບເຮັດໃຫ້ຄວາມຮັກນັ້ນກາຍເປັນພຽງຄວາມຮູ້ສຶກທີ່ບໍ່ແບ່ງແຍກຄວາມແຕກຕ່າງລະຫວ່າງຄວາມດີ ແລະ ຄວາມຊົ່ວ. ຄວາມຍຸຕິທຳຂອງພຣະເຈົ້າ, ການທີ່ພຣະອົງກ່າວໂທດຄວາມບາບ ແລະ ຂໍ້ກຳນົດຂອງພຣະບັນຍັດອັນບໍຣິສຸດຂອງພຣະອົງລ້ວນແຕ່ຖືກປິດບັງໄວ້. ຜູ້ຄົນຖືກສອນໃຫ້ເຫັນວ່າ ພຣະບັນຍັດສິບປະການເປັນພຽງຕົວໜັງສືທີ່ຕາຍແລ້ວ. ມີນິທານທີ່ໜ້າຟັງທີ່ສາມາດດຶງດູດຄວາມສົນໃຈຂອງຜູ້ຄົນໃຫ້ຫຼົງໄຫຼ ຈົນປະຕິເສດວ່າພຣະຄຳພີເປັນຮາກຖານແຫ່ງຄວາມເຊື່ອຂອງພວກເຂົາ. ພຣະຄຣິສຍັງຖືກປະຕິເສດຢ່າງແທ້ຈິງເໝືອນເດີມ; ແຕ່ຊາຕານໄດ້ເຮັດໃຫ້ຕາຂອງຄົນທັງຫຼາຍມືດບອດ ຈົນພວກເຂົາບໍ່ສາມາດເຫັນການຫຼອກລວງນີ້ໄດ້. {GC 558.1}

ມີພຽງບໍ່ເທົ່າໃດຄົນທີ່ເຂົ້າໃຈຢ່າງແທ້ຈິງກ່ຽວກັບພະລັງແຫ່ງການຫຼອກລວງຂອງການຕິດຕໍ່ກັບວິນຍານ ແລະ ໄພອັນຕະລາຍຈາກການຕົກຢູ່ພາຍໃຕ້ອິດທິພົນຂອງມັນ. ຫຼາຍຄົນເຂົ້າໄປຫຼິ້ນກັບມັນພຽງເພື່ອຄວາມຢາກຮູ້ຢາກເຫັນ. ພວກເຂົາບໍ່ໄດ້ເຊື່ອຖືມັນຢ່າງແທ້ຈິງ ແລະ ຄົງຮູ້ສຶກຢ້ານກົວ ຖ້າຮູ້ວ່າກຳລັງຍອມໃຫ້ວິນຍານເຫຼົ່ານັ້ນຄວບຄຸມຕົວເອງ. ແຕ່ເມື່ອພວກເຂົາກ້າວເຂົ້າໄປໃນເຂດຫວງຫ້າມ ຊາຕານກໍໃຊ້ອຳນາດຂອງມັນໃນການບັງຄັບພວກເຂົາໃຫ້ເຮັດໃນສິ່ງທີ່ພວກເຂົາບໍ່ເຕັມໃຈເຮັດ. ເມື່ອພວກເຂົາຍອມໃຫ້ຈິດໃຈຂອງຕົນຢູ່ພາຍໃຕ້ການນຳພາຂອງມັນພຽງຄັ້ງດຽວ, ມັນກໍຈະຄວບຄຸມພວກເຂົາໄວ້. ເປັນໄປບໍ່ໄດ້ທີ່ພວກເຂົາຈະໃຊ້ກຳລັງຂອງຕົນເອງ ເພື່ອຫຼຸດພົ້ນຈາກມົນສະກົດນີ້. ມີພຽງແຕ່ຣິດອຳນາດຂອງພຣະເຈົ້າເທົ່ານັ້ນ ທີ່ຈະປົດປ່ອຍຈິດວິນຍານທີ່ຕິດກັບດັກນີ້ໄດ້ ເຊິ່ງຈະປະທານໃຫ້ເມື່ອມີການອະທິຖານຢ່າງຮ້ອນຮົນດ້ວຍຄວາມເຊື່ອ. {GC 558.2}

ທຸກຄົນທີ່ປ່ອຍຕົວໄປຕາມນິໄສບາບຂອງຕົນ ຫຼື ຈົງໃຈຮັກສາຄວາມບາບເອົາໄວ້ ກໍເທົ່າກັບເປັນການເຊື້ອເຊີນການລໍ້ລວງຂອງຊາຕານ. ພວກເຂົາແຍກຕົວອອກຈາກພຣະເຈົ້າ ແລະ ຈາກການປົກປ້ອງຂອງທູດສະຫວັນຂອງພຣະອົງ. ເມື່ອມານຮ້າຍມາລໍ້ລວງພວກເຂົາກໍບໍ່ມີແນວປ້ອງກັນ ແລ້ວຈຶ່ງກາຍເປັນເຫຍື່ອຢ່າງງ່າຍດາຍ. ຜູ້ທີ່ຍອມຢູ່ໃຕ້ອຳນາດຂອງມັນແບບນີ້ ບໍ່ຮູ້ເລີຍວ່າໃນທີ່ສຸດແລ້ວຈະຈົບລົງ

ແນວໃດ. ເມື່ອຊາຕານສາມາດຊະນະພວກເຂົາໃຫ້ມາຢູ່ຝ່າຍຂອງຕົນ ມັນກໍຈະໃຊ້ພວກເຂົາເປັນເຄື່ອງມືຂອງມັນ ເພື່ອນຳພາຄົນອື່ນໄປສູ່ຄວາມພິນາດ. {GC 558.3}

ຜູ້ເຜີຍພຣະທຳເອຊາຢາກ່າວວ່າ: "ເມື່ອຄົນບອກໃຫ້ທ່ານໄປປຶກສາຄົນຊົ່ງເຈ້ົາເຂົ້າຜີ ເຊ່ິງ . . . ຈົ່ມພຶມພຳ, ປະຊາຊົນບໍ່ຄວນທູນຖາມພຣະເຈ້ົາຂອງຕົນຫຼື? ເຫດໃດໄປຫາລືກັບຄົນຕາຍເພື່ອຄົນເປັນ? ຈົ່ງໄປຄົ້ນເບ່ິງບົດບັນຍັດ ແລະ ຄຳພະຍານ! ຖ້າພວກເຂົາບໍ່ໄດ້ເວົ້າຕາມນ້ີ ພວກເຂົາກໍບໍ່ໄດ້ມີແສງສະຫວ່າງແຫ່ງຮຸ່ງອາລຸນຢູ່ເລີຍ." (ເອຊາຢາ 8:19, 20 ດັດແປງຈາກສະບັບ TNCV). ຖ້າມະນຸດຍອມຮັບຄວາມຈິງທ່ີພຣະຄຳພີສອນຢ່າງຈະແຈ້ງ ກ່ຽວກັບທຳມະຊາດຂອງມະນຸດ ແລະ ສະພາບຂອງຄົນຕາຍ, ພວກເຂົາກໍຈະເຫັນວ່າ ການອ້າງ ແລະ ການສະແດງຕ່າງໆຂອງລັດທິຕິດຕໍ່ວິນຍານນັ້ນ ແມ່ນວຸ້ກງ່ານຂອງຊາຕານທ່ີໃຊ້ຣິດອຳນາດ, ໝາຍສຳຄັນ ແລະ ການອັດສະຈັນເພ່ືອຫຼອກລວງ. ແຕ່ຄົນຈຳນວນຫຼາຍບ່ໍຍອມສະຫຼະເສລີພາບທ່ີເຮັດໃຫ້ຈິດໃຈຝ່າຍເນ້ືອໜັງມ່ວນຊ່ືນ; ແລະ ບ່ໍຍອມເຊ່ົາເຮັດບາບທ່ີພວກເຂົ້ามັກ. ພວກເຂົ້າຈ່ຶງປິດຕາຕໍ່ແສງສະຫວ່າງ ແລະ ຍ່າງໄປຂ້ າງໜ້ າໂດຍບ່ໍສົນໃຈຄຳຕັກເຕືອນ. ໃນຂະນະທ່ີຊາຕານຖ້ ກແຫ ອ້ ອມຄົນເຫ ົ ານ້ ີໄວ ້ ພວກເຂົ ້ ากໍ ກ ายເປ ັ ນເຫ ຍ ື ່ ອຂອງ ມັ ນ "ເພ າ ะພ ວ ก เ ข ົ ้ า บ ่ ໍ ได ้ ย อ ม ร ั บ ค ว า ม จ ิ ง เ ช ่ ิ ง จ ะ ช ่ ว ย พ ว ก เ ข ้ า ใ ห ้ พ ้ ็ น . ด ั ่ ง น ั ้ น , พ ร ะ เ จ ้ า จ ่ ึ ง ใ ห ้ อิดທິພົນອັນຫຼອກລວງນ້ັน ເຮັດການຢູ່ພາຍໃນ ເພ່ືອໃຫ້ພວກເຂົ້າເຊ່ືອຟັງຄວາມບ່ໍຈິງ." (2 ເທສະໂລນິກ 2:10–11). {GC 559.1}

ຜູ້ທ່ີຕ່ໍຕ້ານຄຳສອນຂອງການຕິດຕ່ໍກັບວິນຍານນ້ັນບ່ໍໄດ້ຕ່ໍສ ູ ้ ກ ับ ม ะ น ุ ด เ ท ่ า น ั ้ น แ ต ่ ก ำ ล ั ง ต ่ ๋ ส ู ้ ก ั บ ซ า ต า น ແ ล ะ ບ ั น ด า ท ู ด ข อ ง ม ั น . พ ว ก เ ข ้ า ไ ด ้ เ ข ้ า ต ่ ๋ ส ู ้ ก ั บ "ບ ั น ด า ผ ู ้ ป ก ค อ ง , ต ่ ๋ ส ู ้ ก ั บ ผ ู ้ ม ี ส ิ ด อ ำ น า ด . . . แ ล ะ ต ่ ๋ ส ู ้ ก ั บ บ ั น ด า ว ิ น ย า น ฝ ่ า ย ค ว า ม ช ั ่ ว ร ้ า ย ใ น อ า ก า ศ ส ะ ถ า น ." (ເອເຟໂຊ 6:12 LCV). ຊາຕານຈະບ່ໍຍອມຖອຍແມ່ນແຕ່ກ້ າວດຽວ ເວ້ັนแต่ว่ามันจะถ ูกขับไล่ด้วยอำนาดของเຫ ົ ากูดสะหวัน. ປະຊາກອນຂອງພຣະເຈ ้ าคอนสามาดต่ ๋ สู ้ กับมัน ເໝ ือนดั ่ งพระผู ้ ช ่ วยให ้ ลอด ของพวกเรา ໂดยกล่าวว่า: "ມ ีพ ร ะ ค ำ ข ย ุ น ไ ว ้ แ ล ้ อ ." ซ า ต า น ส า ม า ด อ ้ า ง อ ิ ง พ ร ะ ค ำ พ ี ไ ด ้ ใ ນ ปัดจุบัน ເໝ ือนในสะไໝของพระคริส ແล ะ มันจะบิดเบือนคำสอน เพื่อสะໜับสะໜุนการหลอกลวงของมัน. ผู้ที่จะยืนอยู่ได้ในยามอันตะลายนี้จำเป็นต้องเข้ำใจพระคำพีด้วยตนเอง. {GC 559.2}

ພຣະຄຳເປັນເກາະກຳບັງ

ຫຼายคนจะปะเชิญหน้ ากับวินยานช่ือที่ปอมต ือเป็นยาดตีพ่ีน้ องหรือ ໝู่เพื่อนที่ล่วงลับไปแล้ว ແล ะ ปะกาดคำสอนบอกธีดที่อันตะลายที่สุด. ວິนยานเหล ่ านี้จะใช้ดวามรู้สึกผูกพันของพวกเราเป็นเครื่องมือ ແล ะ จะเธ ็ ดการอัดสะจัน เพื่อเธ ็ ดให ้ การหลอกลวงของมันเบ่ิงดีหน้ าเช่ือถ ื. พวกเราต้องกงมพ้อมที่จะต่ ๋ ต ้ านพวกมัน ด้วยดวามจิงจากพระคำพีที่ว่า คนตายบ่ ๋ รู ้ จักสิ ่ งใดเลย ແล ะ สิ ่ งที่ปากกดให ้ เห ็ นนั ้ น แม่นทูดช่ัวร้ายฝ่ายมาน ซาตาน. {GC 560.1}

"ช่ัวโมงแห่งการทดลอง . . . กำลังมาเถิงทั่วทั้งโลกนี้ เพื่อทดลองบันดาผู้ที่อาไสยู่เหิงแผ่นดินโลก." (พระนิมิด 3:10 LCV). ทุกคนที่บ่ ๋ ได ้ ต ั ้ งดวามเช่ือของตนไว ้ อย ่ างหม ั ้ นดงเหิง พระคำของพระเจ้ าจะถ ูกหลอกลวง ແล ะ จะพ่ายแพ้. ซาตาน "ใช้ดวามช่ัวร้ายทุกอย่าง ทลอกลวง" เพื่อดวบคุมลูกหลานของมะนุด (2 เทสะโลนิกา 2:10 LCV); กำนอยของมันจะนับมื้ นับร้ายกาดยิ่งขึ้น. แต่มันจะสำเล็ดได้กต่ ๋ เมื่อมะนุดสะหมักใจยอมจำนนต่ ๋ การ

ລໍ້ລວງຂອງມັນເທົ່ານັ້ນ. ສຳລັບຜູ້ທີ່ພາກພຽນຊອກຮູ້ຄວາມຈິງ ແລະ ພະຍາຍາມຊຳລະຈິດໃຈຂອງຕົນດ້ວຍການເຊື່ອຟັງ ໂດຍເຮັດທຸກວິທີທາງເພື່ອກຽມພ້ອມສຳລັບການຕໍ່ສູ້ທີ່ຈະມາເຖິງ, ຈະພົບວ່າ ພຣະເຈົ້າແຫ່ງຄວາມຈິງຊົງເປັນທີ່ກຳບັງອັນໝັ້ນຄົງ. “ເນື່ອງຈາກເຈົ້າໄດ້ຮັກສາຄຳສັ່ງຂອງເຮົາໄວ້ດ້ວຍຄວາມພາກພຽນອົດທົນ, ເຮົາກໍຈະປົກປ້ອງເຈົ້າ.” (ພຣະນິມິດ 3:10 LCV). ນີ້ແມ່ນພຣະສັນຍາຂອງພຣະຜູ້ຊ່ວຍໃຫ້ລອດ. ພຣະອົງຍິນດີສົ່ງທູດສະຫວັນທັງໝົດອອກຈາກສະຫວັນ ເພື່ອປົກປ້ອງໄພ່ພົນພຽງຄົນດຽວຂອງພຣະອົງ ເພື່ອບໍ່ໃຫ້ຊາຕານເອົາຊະນະຜູ້ທີ່ເຊື່ອວາງໃຈໃນພຣະອົງ. {GC 560.2}

ຜູ້ເຜີຍພຣະທຳເອຊາຢາໄດ້ເຫັນການຫຼອກລວງອັນໜ້າຢ້ານກົວທີ່ຈະຄອບງຳຄົນຊົ່ວ ເຮັດໃຫ້ພວກເຂົາຄິດວ່າຕົນປອດໄພຈາກການພິພາກສາຂອງພຣະເຈົ້າ, ໂດຍເພີ່ນຂຽນໄວ້ວ່າ: “ພວກເຮົາໄດ້ທຳຄຳສັນຍາໄວ້ກັບຄວາມຕາຍ ແລະ ໄດ້ຕັ້ງຄຳສັນຍາເປັນໄມຕີກັບບ່ອນທີ່ຕາບໍ່ເຫັນ. ຖ້າການອັນຕະລາຍມາຖ້ວມ, ມັນຈະບໍ່ເຖິງພວກເຮົາ, ເຫດວ່າພວກເຮົາໄດ້ເອົາຄວາມຕົວະເປັນທີ່ເພິ່ງ ແລະ ໄດ້ລີ້ຕົວໃຕ້ຄວາມບໍ່ຈິງ.” (ເອຊາຢາ 28:15 ສະບັບລາວບູຮານ). ໃນກຸ່ມຄົນທີ່ກ່າວເຖິງນີ້ ມີຜູ້ທີ່ແຂງກະດ້າງບໍ່ຍອມກັບໃຈ ໃນຂະນະທີ່ປອບໃຈຕົນເອງດ້ວຍຄວາມເຊື່ອວ່າ ບໍ່ມີການລົງໂທດຄົນບາບ. ພວກເຂົາເຊື່ອວ່າມະນຸດທຸກຄົນ ບໍ່ວ່າຈະຊົ່ວຊ້າປານໃດກໍຈະໄດ້ຂຶ້ນສະຫວັນ ແລະ ກາຍເປັນເໝືອນທູດສະຫວັນຂອງພຣະເຈົ້າ. ຍິ່ງໜັກໄປກວ່ານັ້ນກໍມີຜູ້ທີ່ເຮັດພັນທະສັນຍາກັບຄວາມຕາຍ ແລະ ເຮັດຂໍ້ຕົກລົງກັບນະຮົກ ໃນຂະນະທີ່ປະຕິເສດຄວາມຈິງທີ່ສະຫວັນປະທານໃຫ້ເພື່ອປົກປ້ອງຄົນຊອບທຳໃນຍາມລຳບາກ. ແທນທີ່ຈະເຊື່ອຄວາມຈິງ, ພວກເຂົາພັດຍອມຮັບເອົາທີ່ລີ້ໄພປອມຂອງຊາຕານ ຄືການຫຼອກລວງເລື່ອງການຕິດຕໍ່ກັບເຫຼົ່າວິນຍານນັ້ນເອງ. {GC 560.3}

ຄວາມມືດບອດຂອງຄົນໃນຍຸກນີ້ເປັນສິ່ງທີ່ໜ້າຕົກຕະລຶງເກີນຈະພັນລະນາໄດ້. ຄົນຈຳນວນຫຼວງຫຼາຍປະຕິເສດພຣະຄຳຂອງພຣະເຈົ້າວ່າບໍ່ໜ້າເຊື່ອຖື ແຕ່ພັດຮັບເອົາການຫຼອກລວງຂອງຊາຕານດ້ວຍຄວາມໝັ້ນໃຈ. ພວກທີ່ມັກສົ່ງໄສ ແລະ ເຍາะเย้ย ໄດ້ປະນາມວ່າຄົນທີ່ຢຶດໝັ້ນໃນຄວາມເຊື່ອຂອງບັນດາຜູ້ເຜີຍພຣະທຳ ແລະ ອັກຄະສາວົກນັ້ນເປັນພວກທີ່ຈິດໃຈດີ້ດ້ານບໍ່ມີເຫດຜົນ. ພວກເຂົາພາກັນເยาะเย้ยຖາກຖາງຄຳປະກາດອັນສັກສິດໃນພຣະຄຳພີກ່ຽວກັບພຣະຄຣິສ, ແຜນການຊ່ວຍມະນຸດໃຫ້ລອດ ແລະ ການລົງໂທດທີ່ຈະມາເຖິງຄົນທີ່ປະຕິເສດຄວາມຈິງ. ພວກເຂົາເຮັດຄືເວດທະນາສົ່ງສານຄົນທີ່ຍອມຮັບສິດອຳນາດຂອງພຣະເຈົ້າ ແລະ ປະຕິບັດຕາມຂໍ້ກຳນົດໃນພຣະບັນຍັດຂອງພຣະອົງ ໂດຍຫາວ່າເປັນພວກທີ່ມີຈິດໃຈຄັບແຄບ, ອ່ອນແອ ແລະ ງົມງວາຍ. ພວກເຂົາສະແດງຄວາມໝັ້ນໃຈຄືກັບວ່າໄດ້ເຮັດສັນຍາກັບຄວາມຕາຍ ແລະ ໄດ້ເຮັດຂໍ້ຕົກລົງກັບນະຮົກແທ້ໆ ເໝືອນວ່າໄດ້ສ້າງກຳແພງທີ່ບໍ່ມີໃຜຂ້າມ ຫຼື ທະລຸໄດ້ລະຫວ່າງຕົນເອງກັບການລົງໂທດຂອງພຣະເຈົ້າ. ບໍ່ມີສິ່ງໃດທີ່ຈະເຮັດໃຫ້ພວກເຂົາຢ້ານກົວໄດ້. ພວກເຂົາຍອມຈຳນົນຕໍ່ການລໍ້ລວງຂອງຊາຕານຢ່າງເຕັມທີ່, ຜູກພັນກັບມັນຢ່າງໃກ້ຊິດ ແລະ ເຕັມໄປດ້ວຍແນວຄິດຂອງມັນ ຈົນພວກເຂົາບໍ່ມີກຳລັງ ຫຼື ຄວາມປາຖະໜາທີ່ຈະຫຼຸດພົ້ນຈາກກັບດັກຂອງມັນເລີຍ. {GC 561.1}

ຊາຕານໄດ້ກຽມຄວາມພ້ອມມາດົນນານເພື່ອຫຼອກລວງມະນຸດສະໂລກເປັນຄັ້ງສຸດທ້າຍ. ມັນວາງຮາກຖານການຫຼອກລວງນີ້ໄວ້ດ້ວຍຄຳສັນຍາທີ່ໃຫ້ແກ່ເອວາໃນສວນເອເດນວ່າ: “ເຈົ້າຈະບໍ່ຕາຍແນ່ນອນ.” “ເມື່ອໃດທີ່ເຈົ້າກິນໝາກໄມ້ຈາກຕົ້ນນັ້ນ ຕາຂອງເຈົ້າກໍຈະຖືກເປີດອອກ ແລະ ເຈົ້າຈະເປັນເໝືອນພຣະເຈົ້າ, ຄືຮູ້ຈັກດີ ແລະ ຮູ້ຈັກຊົ່ວ.” (ປະຖົມມະການ 3:4, 5 LCV). ມັນຄ່ອຍໆ ກະກຽມທາງສຳລັບແຜນການຫຼອກລວງຊິ້ນເອກຂອງມັນ ໂດຍການພັດທະນາລັດທິຕິດຕໍ່ວິນຍານ ເຊິ່ງສອນວ່າມະນຸດມີດວງວິນຍານທີ່ບໍ່ຕາຍ. ເຖິງແມ່ນວ່າ ມັນຍັງບໍ່ທັນບັນລຸຈຸດປະສົງ

ທັງໝົດຂອງມັນເທື່ອ, ແຕ່ແຜນການຂອງມັນຈະສຳເລັດກ່ອນພຣະເຢຊູສະເດັດກັບມາພຽງເລັກນ້ອຍ. ຜູ້ເຜີຍພຣະທຳກ່າວວ່າ: “ຂ້າພະເຈົ້າໄດ້ເຫັນວິນຍານຊົ່ວຮ້າຍສາມດວງ ມີລັກສະນະເໝືອນໂຕກົບ . . . ວິນຍານເຫຼົ່ານັ້ນເປັນພີມານຮ້າຍ ທີ່ເຮັດໝາຍສຳຄັນ ມັນອອກໄປຫາກະສັດທັງຫຼາຍທົ່ວພິພົບໂລກ ເພື່ອໃຫ້ກະສັດເຫຼົ່ານັ້ນມາຮ່ວມກັນສຳລັບການສົງຄາມໃນວັນອັນໃຫຍ່ຫຼວງຂອງພຣະເຈົ້າ ຜູ້ຊົງຣິດທານຸພາບສູງສຸດ.” (ພຣະນິມິດ 16:13, 14). ຜູ້ທີ່ເຊື່ອໃນພຣະຄຳຂອງພຣະເຈົ້າ ຈະໄດ້ຮັບການປົກປັກຮັກສາໄວ້ດ້ວຍຣິດອຳນາດຂອງພຣະອົງ; ນອກຈາກຄົນເຫຼົ່ານີ້ແລ້ວ, ມະນຸດສະໂລກທັງປວງຈະຫຼົງເຊື່ອການຫຼອກລວງນັ້ນ. ຄົນທັງຫຼາຍກຳລັງຖືກກ່ອມໃຫ້ຫຼັບໄຫຼໃນຄວາມຮູ້ສຶກປອດໄພ ທັງໆ ທີ່ກຳລັງຢູ່ໃນອັນຕະລາຍ ແລະ ຈະບໍ່ຕື່ນຂຶ້ນ ຈົນກວ່າພຣະພິໂຣດຂອງພຣະເຈົ້າຖືກຖອກເທລົງມາເທົ່ານັ້ນ. *{GC 561.2}*

ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: “ຄວາມຍຸຕິທຳຈະເປັນເສັ້ນວັດແທກຮາກຖານ ແລະ ຄວາມສັດຊື່ຈະເປັນສາຍຢັ່ງຄວາມທຸ່ນທ່ຽງ. ພະຍຸໝາກເຫັບຈະກວາດເອົາຄຳເວົ້າຕົວະຂອງພວກເຈົ້າໄປຈົນໝົດ ແລະ ນ້ຳຖ້ວມຈະທຳລາຍຄວາມໝັ້ນຄົງຂອງພວກເຈົ້າ. ຂໍ້ສັນຍາທີ່ພວກເຈົ້າໄດ້ເຮັດກັບຄວາມຕາຍຈະຖືກທຳລາຍ ແລະ ຂໍ້ຕົກລົງທີ່ພວກເຈົ້າໄດ້ເຮັດກັບແດນມໍຣະນາກໍຈະຖືກຍົກເລີກ. ເມື່ອຄວາມຈິບຫາຍມາເຖິງ ມັນຈະຢຽບຢ້ຳພວກເຈົ້າລົງ.” (ເອຊາຢາ 28:17–18). *{GC 562.1}*



ເຫດການທີ່ສະແດງເຖິງນະໂຍບາຍຂອງຄຣິສຕະຈັກໂຣມຕໍ່ຜູ້ທີ່ບໍ່ເຫັນດີກັບ
ພວກເຂົາສາມາດເບິ່ງເຫັນໄດ້ຈາກການຂົ່ມເຫັງ ແລະ ການເຂັ້ນຂ້າຊາວໂວດົວທີ່
ດຳເນີນໄປຢ່າງດົນນານ ເຊິ່ງມີຊາວໂວດົວບາງຄົນຖືຮັກສາວັນສະບາໂຕ.

ເບິ່ງໜ້າ 466.

Image generated with AI (Google Gemini).

35

ເສລີພາບທາງຈິດສຳນຶກຖືກຄຸກຄາມ

ເງົາມືດຂອງໂຣມກັບຄືນມາ

ໃນປັດຈຸບັນນີ້ ສະມາຊິກຄຣິສຕະຈັກຕ່າງ ໆ ຂອງນິກາຍໂປຣແຕັສຕັງມີທ່າທີເປັນມິດຕໍ່ນິກາຍໂຣມັນ ກາໂຕລິກຫຼາຍກວ່າແຕ່ກ່ອນ. ໃນບັນດາປະເທດທີ່ຄຣິສຕະຈັກກາໂຕລິກບໍ່ໄດ້ຄອງອຳນາດ, ຄົນທີ່ຢູ່ ຝ່າຍສັນຕະປາປາໄດ້ໃຊ້ວິທີປະນີປະນອມ ເພື່ອເພີ່ມອິດທິພົນຂອງຕົນ. ຄົນໃນປະເທດເຫຼົ່ານັ້ນ ນັບມື້ກໍ ບໍ່ໃຫ້ຄວາມສຳຄັນຕໍ່ຄວາມແຕກຕ່າງລະຫວ່າງຄຳສອນຂອງຄຣິສຕະຈັກຝ່າຍການປະຕິຮູບກັບລະບອບ ສັນຕະປາປາ. ຄົນເລີ່ມເຫັນວ່າ ຫຼັກຄວາມເຊື່ອສຳຄັນບໍ່ໄດ້ແຕກຕ່າງກັນຫຼາຍເໝືອນດັ່ງທີ່ເຄີຍຄິດ; ແລະ ຖ້າພວກເຮົາພຽງແຕ່ຍອມອ່ອນຂໍ້ອີກເລັກນ້ອຍ ກໍຈະເຮັດໃຫ້ເຮົາສາມາດເຂົ້າກັບຄຣິສຕະຈັກໂຣມໄດ້ດີ ຂຶ້ນ. ໃນອະດີດ, ພວກໂປຣແຕັສຕັງເຄີຍເຫັນຄຸນຄ່າຂອງເສລີພາບທາງຈິດສຳນຶກທີ່ຕ້ອງແລກມາດ້ວຍ ລາຄາແພງ. ພວກເຂົາສອນລູກຫຼານໃຫ້ກຽດຊັງລະບອບສັນຕະປາປາ ແລະ ຖືວ່າການຊອກຫາຄວາມ ສາມັກຄີກັບໂຣມແມ່ນການທໍລະຍົດຕໍ່ພຣະເຈົ້າ. ແຕ່ຄວາມຄິດເຫັນໃນປັດຈຸບັນນີ້ ຊ່າງແຕກຕ່າງກັບ ອະດີດເຫຼືອເກີນ! *{GC 563.1}*

ຜູ້ປົກປ້ອງລະບອບສັນຕະປາປາປະກາດວ່າ ຄຣິສຕະຈັກຂອງພວກເຂົາຖືກໃສ່ຮ້າຍປ້າຍສີ; ສ່ວນ ວົງການໂປຣແຕັສຕັງກໍພ້ອມທີ່ຈະຍອມຮັບຄຳປະກາດນີ້. ຫຼາຍຄົນກ່າວວ່າ ບໍ່ຍຸຕິທຳທີ່ຈະຕັດສິນ ຄຣິສຕະຈັກໂຣມໃນປັດຈຸບັນ ໂດຍອີງໃສ່ການກະທຳທີ່ໜ້າລັງກຽດ ແລະ ຄວາມໂງ່ຈ້າທີ່ເກີດຂຶ້ນຫຼາຍ ຮ້ອຍປີ ໃນສະໄໝຍຸກມືດທີ່ຄຣິສຕະຈັກໂຣມປົກຄອງ ແລະ ຜູ້ຄົນຂາດຄວາມຮູ້. ພວກເຂົາແກ້ຕົວໃຫ້ ກັບການກະທຳທີ່ໂຫດຮ້າຍທາລຸນຂອງຄຣິສຕະຈັກໂຣມວ່າ ເປັນຍ້ອນສະພາບປ່າເຖື່ອນຂອງຍຸກສະໄໝ ນັ້ນ ແລະ ອ້າງວ່າຄວາມຈະເລີນຂອງໂລກສະໄໝໃໝ່ໄດ້ປ່ຽນແປງຄວາມຄິດເຫັນຂອງຄຣິສຕະຈັກ ແລ້ວ. *{GC 563.2}*

ຄົນເຫຼົ່ານີ້ລືມຄຳອວດອ້າງອັນຈອງຫອງຂອງຄຣິສຕະຈັກໂຣມແລ້ວບໍ ທີ່ປະກາດເປັນເວລາ 800 ປີ ວ່າພວກເຂົາບໍ່ມີຄວາມຜິດພາດຈັກເທື່ອ? ຄຳອ້າງນີ້, ບໍ່ພຽງແຕ່ບໍ່ໄດ້ຖືກຍົກເລີກ ແຕ່ຍັງຖືກຢືນຢັນ ໃນສະຕະວັດທີ 19 ດ້ວຍຄວາມໝັ້ນໃຈຫຼາຍກວ່າເກົ່າ. ຄຣິສຕະຈັກໂຣມອ້າງວ່າ “ຄຣິສຕະຈັກ*ບໍ່ເຄີຍ ຜິດພາດ* ແລະ ຕາມຫຼັກພຣະຄຳພີແລ້ວ*ຈະບໍ່ມີວັນຜິດພາດ*.”[1] ເມື່ອມີການອ້າງເຊັ່ນນີ້ແລ້ວ ພວກເຂົາ ຈະປະຕິເສດຫຼັກການທີ່ໃຊ້ປົກຄອງໃນອະດີດໄດ້ແນວໃດ? *{GC 564.1}*

ຄຣິສຕະຈັກກາໂຕລິກຈະບໍ່ມີວັນຍອມສະຫຼະຄຳອ້າງວ່າຕົນບໍ່ມີການຜິດພາດ. ພວກເຂົາຖືວ່າ ທຸກ ສິ່ງທີ່ຄຣິສຕະຈັກໂຣມໄດ້ເຮັດໄປໃນການຂົ່ມເຫັງຜູ້ທີ່ປະຕິເສດຫຼັກຄຳສອນຂອງຕົນນັ້ນຖືກຕ້ອງແລ້ວ. ຖ້າ ມີໂອກາດອີກພວກເຂົາຈະບໍ່ເຮັດແບບດຽວກັນບໍ? ຖ້າຝ່າຍປົກຄອງໄດ້ຍົກເລີກຂໍ້ຈຳກັດທີ່ມີຢູ່ໃນປັດຈຸບັນ

[1] ຈອນ ແອວ. ຟອນ ໂມເຊມ (John L. von Mosheim), *Institutes of Ecclesiastical History*, ເຫຼັ້ມ 3, ສະຕະວັດ ທີ 11, ພາກ 2, ບົດ 2, ຂໍ້ 9, ໝາຍເຫດ 17.

ແລະ ປ່ອຍໃຫ້ຄຣິສຕະຈັກໂຮມໄດ້ກັບຄືນສູ່ອຳນາດດັ້ງເດີມ, ການກົດຂີ່ຂົ່ມເຫັງ ແລະ ການປົກຄອງ ແບບຜະເດັດການກໍຈະຟື້ນຄືນມາຢ່າງໄວອາ. {GC 564.2}

ນັກຂຽນຜູ້ມີຊື່ສຽງຄົນໜຶ່ງໄດ້ກ່າວເຖິງທ່າທີຂອງລະບອບສັນຕະປາປາກ່ຽວກັບເສລີພາບທາງຈິດ ສຳນຶກ ແລະ ອັນຕະລາຍທີ່ຈະເກີດຂຶ້ນກັບສະຫະລັດອາເມຣິກາ ຖ້າແຜນການຂອງຄຣິສຕະຈັກໂຮມ ສຳເລັດດັ່ງຕໍ່ໄປນີ້ວ່າ: {GC 564.3}

“ຫຼາຍຄົນເຫັນວ່າ ການຢ້ານກົວຄຣິສຕະຈັກໂຮມັນກາໂຕລິກໃນສະຫະລັດອາເມຣິກາ ເປັນເລື່ອງ ຂອງອະຄະຕິ ຫຼື ຄວາມຄິດແບບເດັກນ້ອຍ. ຄົນເຫຼົ່ານີ້ບໍ່ເຫັນລັກສະນະ ຫຼື ທ່າທີຂອງຝ່າຍຄຣິສຕະຈັກ ໂຮມທີ່ເປັນອັນຕະລາຍຕໍ່ສະຖາບັນອັນເປັນອິດສະຫຼະຂອງພວກເຮົາ ແລະ ບໍ່ເຫັນວ່າການເຕີບໃຫຍ່ ຂະຫຍາຍຕົວຂອງຄຣິສຕະຈັກໂຮມເປັນລາງຮ້າຍແຕ່ຢ່າງໃດ. ດັ່ງນັ້ນ, ໃຫ້ພວກເຮົາສົມທຽບຫຼັກການ ພື້ນຖານບາງຢ່າງຂອງລັດຖະບານພວກເຮົາ ກັບຫຼັກການຂອງຄຣິສຕະຈັກກາໂຕລິກ.” {GC 564.4}

“ລັດຖະທຳມະນູນຂອງສະຫະລັດຮັບປະກັນ*ເສລີພາບທາງຈິດສຳນຶກ*. ນີ້ແມ່ນຫຼັກການພື້ນຖານທີ່ ສຳຄັນທີ່ສຸດຂອງອາເມຣິກາ. ສັນຕະປາປາປີອູດທີ 9 ໄດ້ກ່າວໃນຈົດໝາຍອະທິບາຍຄວາມເຊື່ອລົງ ວັນທີ 15 ສິງຫາ 1854 ວ່າ: ‘ຫຼັກຄຳສອນທີ່ໂງ່ຈ້າ ແລະ ຜິດພາດ ພ້ອມດ້ວຍຄຳເວົ້າອັນຂາດ ສະຕິທີ່ປົກປ້ອງເສລີພາບທາງຈິດສຳນຶກນັ້ນ ແມ່ນຄວາມຜິດພາດທີ່ອັນຕະລາຍທີ່ສຸດ ແລະ ເປັນ ໂຣກລະບາດທີ່ໜ້າຢ້ານກົວທີ່ສຸດໃນຝ່າຍປົກຄອງຂອງລັດ.’ ສັນຕະປາປາອົງດຽວກັນນີ້ໄດ້ຂຽນຈົດໝາຍ ອະທິບາຍຄວາມເຊື່ອລົງວັນທີ 8 ທັນວາ 1864 ໂດຍເພີ່ນໄດ້ສາບແຊ່ງ ‘ຜູ້ທີ່ອ້າງສິດເສລີພາບ ທາງຈິດສຳນຶກ ແລະ ການນະມັດສະການ’ ແລະ ‘ທຸກຄົນທີ່ເວົ້າວ່າຄຣິສຕະຈັກບໍ່ມີສິດໃຊ້ອຳນາດ ບັງຄັບ.’” {GC 564.5}

“ທ່າທີອ່ອນນ້ອມຂອງຄຣິສຕະຈັກໂຮມໃນສະຫະລັດບໍ່ໄດ້ສະແດງເຖິງການປ່ຽນທັດສະນະ; ພວກເຂົາ ຍອມຜ່ອນຜັນສະເພາະໃນບ່ອນທີ່ພວກເຂົາບໍ່ມີອຳນາດ. ເຈົ້າຄະນະໂອຄອນເນີກ່າວວ່າ: ‘ພວກເຮົາ ຍອມຮັບເສລີພາບທາງສາສະໜາພຽງຊົ່ວຄາວ ຈົນກວ່າຈະສາມາດປ່ຽນແປງໄປໃນທາງກົງກັນຂ້າມ ໂດຍ ບໍ່ເປັນອັນຕະລາຍຕໍ່ວົງການກາໂຕລິກ.’ ເຈົ້າຄະນະໃຫຍ່ແຫ່ງນະຄອນເຊນຫຼຸຍສ໌ເຄີຍກ່າວວ່າ: ‘ການ ສອນນອກຮີດ ແລະ ການບໍ່ເຊື່ອໃນພຣະເຈົ້າເປັນອາດຊະຍາກຳ. ໃນປະເທດຄຣິສຕຽນເຊັ່ນ: ອີຕາລີ ແລະ ແອັດສະປາຍ (Spain) ບ່ອນທີ່ປະຊາຊົນທັງໝົດເປັນກາໂຕລິກ ແລະ ສາສະໜາກາໂຕລິກ ເປັນສ່ວນສຳຄັນຂອງກົດໝາຍບ້ານເມືອງ, ການສອນນອກຮີດ ແລະ ການບໍ່ເຊື່ອໃນພຣະເຈົ້າ ຈະຖືກ ລົງໂທດຄືກັນກັບອາດຊະຍາກຳອື່ນ ໆ.’” {GC 565.1}

“ທຸກຄົນທີ່ເປັນພຣະຄາດີນັ້ນ, ເຈົ້າຄະນະໃຫຍ່ ຫຼື ເຈົ້າຄະນະໃນຄຣິສຕະຈັກກາໂຕລິກ ຕ້ອງກ່າວ ຄຳປະຕິຍານຕົນຕໍ່ສັນຕະປາປາ ໂດຍມີຖ້ອຍຄຳດັ່ງຕໍ່ໄປນີ້: ‘ຂ້າພະເຈົ້າຈະຂົ່ມເຫັງ ແລະ ຕໍ່ຕ້ານຢ່າງ ສຸດຄວາມສາມາດຕໍ່ພວກນອກຮີດ, ພວກແຍກນິກາຍ ແລະ ຜູ້ກະບົດຕໍ່ເຈົ້ານາຍຂອງພວກເຮົາ (ຄື ສັນຕະປາປາ) ຫຼື ຜູ້ສືບທອດຕຳແໜ່ງຂອງເພິ່ນ.’”[2] {GC 565.2}

ມີຄຣິສຕຽນແທ້ໃນນິກາຍໂຣມັນກາໂຕລິກ; ຄົນຈຳນວນຫຼວງຫຼາຍໃນຄຣິສຕະຈັກນັ້ນ ກຳລັງຮັບໃຊ້ ພຣະເຈົ້າຕາມແສງສະຫວ່າງທີ່ພວກເຂົາມີ. ພວກເຂົາບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າເຖິງພຣະຄຳຂອງພຣະເຈົ້າ;

[2] ໂຢສີຢາ ສະຕອງ (Josiah Strong), *ປະເທດຂອງພວກເຮົາ*, ບົດທີ 5, ວັກທີ 2–4. (ໃນປຶ້ມ *ປະເທດຂອງພວກເຮົາ* ສະບັບ ຕີພິມຄັ້ງທຳອິດ, ທ່ານ ໂຢສີຢາ ສະຕອງ ບໍ່ໄດ້ອ້າງອີງຈາກແຫຼ່ງຂໍ້ມູນຕົ້ນສະບັບ ແລະ ໄດ້ອ້າງຜິດວ່າເປັນຄຳເວົ້າຂອງສັນຕະປາປາ ປີອູດທີ 9. ໃນຄວາມເປັນຈິງຄຳທີ່ອ້າງອີງທຳອິດນັ້ນເປັນຂອງສັນຕະປາປາເກຼັກກໍຣີທີ 16 ຈາກຈົດໝາຍອະທິບາຍຄວາມເຊື່ອລົງວັນ ທີ 15 ສິງຫາ 1832).

ສະນັ້ນ, ພວກເຂົາຈຶ່ງບໍ່ຮູ້ຄວາມຈິງ.[3] ພວກເຂົາບໍ່ເຄີຍເຫັນຄວາມແຕກຕ່າງລະຫວ່າງການນະມັດສະການດ້ວຍໃຈ ກັບການປະຕິບັດຕາມພິທີກຳເທົ່ານັ້ນ. ພຣະເຈົ້າຊົງເບິ່ງຄົນເຫຼົ່ານີ້ດ້ວຍຄວາມເມດຕາ ເພາະພວກເຂົາຖືກສອນຕາມຫຼັກສາສະໜາທີ່ຫຼອກລວງ ເຊິ່ງບໍ່ໄດ້ສ້າງຄວາມອີ່ມໃຈ. ພຣະອົງຈະສ່ອງແສງສະຫວ່າງໃຫ້ທະລຸຄວາມມືດທີ່ອ້ອມຮອບພວກເຂົາ. ພຣະອົງຈະເປີດເຜີຍຄວາມຈິງໃນພຣະເຢຊູຄຣິສແກ່ພວກເຂົາ ແລະ ຫຼາຍຄົນຈະເຂົ້າມາຢືນຢູ່ກັບໄພ່ພົນຂອງພຣະອົງ. *{GC 565.3}*

ໃນປັດຈຸບັນ, ຄຣິສຕະຈັກໂຣມັນກາໂຕລິກບໍ່ໄດ້ສອດຄ່ອງກັບຂ່າວປະເສີດຂອງພຣະຄຣິສ ຫຼາຍກວ່າສະໄໝອື່ນໃນປະຫວັດສາດ. ບັນດາຄຣິສຕະຈັກນິກາຍໂປຣແຕັສຕັງຢູ່ໃນຄວາມມືດອັນໜາທຶບ; ບໍ່ດັ່ງນັ້ນ, ພວກເຂົາຄົງຈະສັງເກດເຫັນໝາຍສຳຄັນແຫ່ງຍຸກສະໄໝ. ຄຣິສຕະຈັກໂຣມມີແຜນການ ແລະ ວິທີການດຳເນີນງານທີ່ກວ້າງໄກ. ພວກເຂົາກຳລັງໃຊ້ທຸກວິທີທາງເພື່ອຂະຫຍາຍອິດທິພົນ ແລະ ເພີ່ມອຳນາດ ເພື່ອກຽມພ້ອມສຳລັບການຕໍ່ສູ້ທີ່ດຸເດືອດ. ເປົ້າໝາຍຂອງພວກເຂົາແມ່ນປົກຄອງໂລກອີກຄັ້ງໜຶ່ງ, ຟື້ນຟູການຂົ່ມເຫັງ ແລະ ລົບລ້າງທຸກສິ່ງທີ່ຝ່າຍໂປຣແຕັສຕັງໄດ້ສ້າງຂຶ້ນ. ຄຣິສຕະຈັກກາໂຕລິກກຳລັງເຕີບໃຫຍ່ໃນທຸກທິດທາງ; ຈົ່ງເບິ່ງຈຳນວນໂບດ ແລະ ວິຫານທີ່ເພີ່ມຂຶ້ນໃນປະເທດໂປຣແຕັສຕັງ. ເບິ່ງມະຫາວິທະຍາໄລ ແລະ ສະຖາບັນສອນສາສະໜາຂອງພວກເຂົາທີ່ມີຊື່ສຽງໃນອາເມຣິກາ ແລະ ມີຊາວໂປຣແຕັສຕັງເຂົ້າຮຽນຢ່າງຫຼວງຫຼາຍ. ເບິ່ງການເພີ່ມຂຶ້ນຂອງພິທີກຳໃນປະເທດອັງກິດ ແລະ ການທີ່ຫຼາຍຄົນໄດ້ຫັນໄປຮັບເຊື່ອໃນຄຣິສຕະຈັກກາໂຕລິກ. ສິ່ງເຫຼົ່ານີ້ຄວນເຮັດໃຫ້ທຸກຄົນທີ່ເຫັນຄຸນຄ່າຂອງຫຼັກການອັນບໍຣິສຸດຂອງຂ່າວປະເສີດເກີດຄວາມກັງວົນ. *{GC 565.4}*

ຄວາມຫຼູຫຼາທີ່ຫຼອກລວງ

ພວກໂປຣແຕັສຕັງເລີ່ມເຫັນດີກັບແນວຄິດຂອງລະບອບສັນຕະປາປາ ແລະ ເອົາໃຈພວກເຂົາ. ຝ່າຍໂປຣແຕັສຕັງໄດ້ຍອມຜ່ອນຜັນ ແລະ ຍອມປະນີປະນອມ ຈົນຄົນທີ່ຢູ່ຝ່າຍກາໂຕລິກເອງກໍປະຫຼາດໃຈ ແລະ ບໍ່ເຂົ້າໃຈ. ຜູ້ຄົນກຳລັງປິດຕາຕໍ່ລັກສະນະທີ່ແທ້ຈິງຂອງລະບອບສັນຕະປາປາ ແລະ ໄພອັນຕະລາຍທີ່ຈະເກີດຂຶ້ນ ຖ້າຄຣິສຕະຈັກໂຣມມີອຳນາດສູງສຸດ. ຄົນທັ້ງຫຼາຍຈຳເປັນຕ້ອງໄດ້ຮັບການເຕືອນ ໃຫ້ລຸກຂຶ້ນຕໍ່ຕ້ານການລຸກລາມຂອງສັດຕູທີ່ອັນຕະລາຍທີ່ສຸດຕໍ່ສິດທິບຸກຄົນ ແລະ ເສລີພາບທາງສາສະໜາ. *{GC 566.1}*

ຄົນທີ່ນັບຖືສາສະໜາຄຣິສນິກາຍໂປຣແຕັສຕັງຫຼາຍຄົນຄິດວ່າ ສາສະໜາກາໂຕລິກໜ້າເບື່ອ ແລະ ການນະມັດສະການຂອງພວກເຂົາບໍ່ມີສິ່ງໃດໜ້າດຶງດູດໃຈ, ມີແຕ່ການເຮັດພິທີຊ້ຳໄປຊ້ຳມາໂດຍບໍ່ມີຄວາມໝາຍ; ແຕ່ນີ້ແມ່ນການເຂົ້າໃຈຜິດ. ເຖິງແມ່ນວ່າ ສາສະໜາໂຣມັນກາໂຕລິກຕັ້ງຢູ່ເທິງການຫຼອກລວງ ແຕ່ບໍ່ແມ່ນການຫຼອກລວງທີ່ງຸ່ມງ່າມເຊີ້ຊ້ຳ. ພິທີການນະມັດສະການຂອງຄຣິສຕະຈັກໂຣມ ມີຄວາມສະຫງ່າງາມອັນໜ້າປະທັບໃຈຫຼາຍທີ່ສຸດ. ການສະແດງອອກທີ່ຫຼູຫຼາງາມຕາ ແລະ ພິທີກຳອັນໜ້າຢຳເກງ ເຮັດໃຫ້ຄົນທັ້ງຫຼາຍຫຼົງລະເລີງຈົນບໍ່ໄດ້ຄິດເປັນເຫດເປັນຜົນ ແລະ ບໍ່ໄດ້ຍົນສຽງເຕືອນຂອງຈິດສຳນຶກຜິດຊອບ. ທຸກສິ່ງທີ່ຕາເຫັນລ້ວນແຕ່ເຮັດໃຫ້ຫຼົງໄຫຼເຊັ່ນ: ໂບດວິຫານອັນໃຫຍ່ໂຕ, ຂະບວນແຫ່ອັນງາມສະຫງ່າ, ແທ່ນບູຊາຄຳ, ສະຖານທີ່ສັກສິດທີ່ປະດັບດ້ວຍເພັດພອຍ, ຮູບແຕ້ມອັນລ້ຳຄ່າ ແລະ ປະຕິມາກຳທີ່ວິຈິດບັນຈົງ; ສິ່ງເຫຼົ່ານີ້ໄດ້ລໍ້ໃຈຄົນທີ່ມັກຄວາມສວຍງາມ. ບໍ່ພຽງແຕ່ຕາເທົ່ານັ້ນ, ຫູກໍຍັງຖືກລໍ້ໃຫ້ຫຼົງລະເລີງເຊັ່ນດຽວກັນ; ດົນຕີຂອງພວກເຂົາກໍລ້ຳເລີດທີ່ສຸດໃນ

[3] ປຶ້ມນີ້ພິມເຜີຍແຜ່ໃນປີ 1888 ແລະ 1911 ກ່ອນສະພາວາຕິກັນທີສອງ. ໃນເວລານັ້ນ, ນິກາຍກາໂຕລິກຫ້າມຄົນທົ່ວໄປອ່ານພຣະຄຳພີ. ນະໂຍບາຍນີ້ໄດ້ປ່ຽນແປງຫຼັງຈາກສະພາວາຕິກັນທີສອງໃນປີ 1962–1965.

ໂລກ. ສຽງອັນໄພເລາະຂອງອໍແກນປະສານກັບສຽງຄະນະນັກຮ້ອງທີ່ດັງກ້ອງກັງວານໃນໂບດວິຫານອັນ ສູງໃຫຍ່ຂອງພວກເຂົາ. ສິ່ງເຫຼົ່ານີ້ສ້າງຄວາມຢຳເກງ ແລະ ຄວາມນັບຖື ໃຫ້ແກ່ຜູ້ຄົນທີ່ໄດ້ເຂົ້າໄປ ສຳຜັດ. *{GC 566.2}*

ຄວາມຫຼູຫຼາຟູ່ຟ່າ, ຄວາມສະຫງ່າງາມ ແລະ ພິທີການຕ່າງໆ ບໍ່ສາມາດປິ່ນປົວຈິດວິນຍານທີ່ເຈັບ ປ່ວຍດ້ວຍບາບ ແຕ່ສະແດງໃຫ້ເຫັນເຖິງສະພາບຈິດໃຈທີ່ຂາດຄວາມບໍຣິສຸດ. ສາສະໜາຂອງພຣະຄຣິສ ບໍ່ຕ້ອງອາໄສສິ່ງດຶງດູດເຫຼົ່ານີ້. ໃນແສງສະຫວ່າງທີ່ສ່ອງມາຈາກໄມ້ກາງແຂນ, ຄຣິສຕະສາສະໜາທີ່ ແທ້ຈິງປາກົດເປັນສິ່ງບໍຣິສຸດ ແລະ ງົດງາມ ຈົນການຕົບແຕ່ງພາຍນອກບໍ່ສາມາດເພີ່ມຄຸນຄ່າໄດ້. ສິ່ງທີ່ ມີຄຸນຄ່າສຳລັບພຣະເຈົ້າ ແມ່ນຄວາມສະຫງ່າງາມທີ່ເກີດຈາກຄວາມບໍຣິສຸດ ແລະ ຈິດໃຈທີ່ນອບນ້ອມ ຖ່ອມຕົນ. *{GC 566.3}*

ການສະແດງອອກທີ່ຫຼູຫຼາບໍ່ໄດ້ເປັນສິ່ງຢືນຢັນວ່າມີຄວາມຄິດທີ່ບໍຣິສຸດ ແລະ ສູງສົ່ງສະເໝີໄປ. ຄວາມເຂົ້າໃຈອັນເລິກເຊິ່ງທາງສິລະປະ ແລະ ການນິຍົມຂອງມີຄຸນນະພາບມັກພົບເຫັນໃນຄົນທີ່ ຫຼົງໃນຄວາມສຸກຝ່າຍເນື້ອໜັງ. ຊາຕານມັກນຳໃຊ້ສິ່ງເຫຼົ່ານີ້ ເພື່ອຊັກນຳໃຫ້ຄົນລືມຄວາມຕ້ອງການ ຂອງຈິດວິນຍານຈົນບໍ່ຄຳນຶງເຖິງຊີວິດນິຣັນ. ມັນພະຍາຍາມນຳຄວາມສົນໃຈຂອງມະນຸດອອກຈາກ ພຣະເຈົ້າ ຜູ້ຊົ່ງສາມາດຊ່ວຍເຫຼືອພວກເຂົາໄດ້ທຸກຢ່າງ ໂດຍມຸ່ງໃຫ້ພວກເຂົາດຳລົງຊີວິດຢູ່ເພື່ອໂລກນີ້ ເທົ່ານັ້ນ. *{GC 567.1}*

ສາສະໜາທີ່ເນັ້ນພິທີກຳພາຍນອກເປັນທີ່ດຶງດູດສຳລັບຄົນທີ່ຍັງບໍ່ໄດ້ກັບໃຈ. ຄວາມຫຼູຫຼາ ແລະ ພິທີ ນະມັດສະການແບບກາໂຕລິກເປັນຄືມົນສະກົດຈິດ ເຊິ່ງເຮັດໃຫ້ຫຼາຍຄົນຫຼົງເຊື່ອ. ພວກເຂົາຈຶ່ງເຫັນ ວ່າ ຄຣິສຕະຈັກໂຣມັນກາໂຕລິກເປັນເໝືອນປະຕູທີ່ຈະເຂົ້າສູ່ສະຫວັນ. ມີແຕ່ຜູ້ທີ່ຢືນໝັ້ນຢູ່ເທິງຮາກຖານ ແຫ່ງຄວາມຈິງ ແລະ ມີຈິດໃຈທີ່ໄດ້ຮັບການປ່ຽນແປງໂດຍພຣະວິນຍານຂອງພຣະເຈົ້າເທົ່ານັ້ນ ທີ່ຈະ ບໍ່ຫຼົງໄປກັບອິດທິພົນຂອງມັນ. ຄົນຈຳນວນຫຼາຍທີ່ບໍ່ມີປະສົບການສ່ວນຕົວກັບພຣະຄຣິສຈະພາກັນ ຮັບເອົາຮູບແບບຂອງສາສະໜາທີ່ບໍ່ມີຣິດອຳນາດ; ສາສະໜາແບບນີ້ແຫຼະທີ່ສັງຄົມສ່ວນໃຫຍ່ຢາກ ໄດ້. *{GC 567.2}*

ການທີ່ຄຣິສຕະຈັກໂຣມອ້າງວ່າມີສິດໃນການອະໄພບາບ ເຮັດໃຫ້ສະມາຊິກຮູ້ສຶກວ່າຕົນມີສິດເຮັດບາບ ໄດ້ຕາມໃຈ. ພິທີສາລະພາບບາບທີ່ເປັນເງື່ອນໄຂຂອງການໃຫ້ອະໄພ ກໍຍັງເປັນການເປີດໂອກາດໃຫ້ເຮັດ ຄວາມຊົ່ວອີກດ້ວຍ. ຄົນທີ່ຄູ້ເຂົ່າຕໍ່ໜ້າມະນຸດທີ່ຫຼົງຜິດ ແລະ ເປີດເຜີຍຄວາມຄິດ ແລະ ຈິນຕະນາການ ອັນເລິກລັບໃນໃຈໃຫ້ແກ່ເຂົາ ກໍໄດ້ທຳລາຍກຽດຂອງການເປັນລູກຜູ້ຊາຍ ແລະ ເຮັດໃຫ້ຈິດສຳນຶກ ຜິດຊອບຂອງຕົນເສື່ອມລົງ. ບາດຫຼວງທຸກຄົນກໍເປັນພຽງມະນຸດທີ່ຫຼົງຜິດ ແລະ ເຮັດບາບ, ຫຼາຍຄົນ ຕິດເຫຼົ້າ ແລະ ຫຼົງມົວເມົາໃນການ. ເມື່ອມີການເປີດເຜີຍຄວາມບາບໃນຊີວິດຂອງຕົນໃຫ້ແກ່ພວກເຂົາ ກໍ ເຮັດໃຫ້ມາດຕະຖານທາງສິນທຳຂອງຕົນເອງຕົກຕ່ຳລົງ ແລະ ສົ່ງຜົນໃຫ້ຈິດໃຈເປ່ເປື້ອນມົນທິນ. ຍ້ອນ ວ່າບາດຫຼວງຢູ່ໃນຖານະເປັນຕົວແທນຂອງພຣະເຈົ້າ, ຜູ້ທີ່ສາລະພາບບາບຕໍ່ເຂົາຈຶ່ງເຂົ້າໃຈພຣະເຈົ້າຜິດ ໄປ ເໝືອນພຣະອົງບໍ່ຕ່າງຫຍັງກັບມະນຸດທຳມະດາຄົນໜຶ່ງ. ການສາລະພາບບາບຕໍ່ມະນຸດດ້ວຍກັນ ເຮັດໃຫ້ມະນຸດເສື່ອມລົງ, ເປັນເຫດໃຫ້ຄວາມຊົ່ວຊ້າແຜ່ຂະຫຍາຍທົ່ວໂລກ ແລະ ກຽມໂລກໃຫ້ພ້ອມສຳລັບ ການຖືກທຳລາຍຄັ້ງສຸດທ້າຍ. ເຖິງຢ່າງນັ້ນ, ສຳລັບຜູ້ທີ່ມັກຕາມໃຈຕົວເອງ ການສາລະພາບຕໍ່ເພື່ອນ ມະນຸດດ້ວຍກັນກໍພໍໃຈຫຼາຍກວ່າການເປີດໃຈຕໍ່ພຣະເຈົ້າ. ສຳລັບທຳມະຊາດຂອງມະນຸດແລ້ວ, ການ ບຳເພັນຕົນເພື່ອຊົດໃຊ້ບາບນັ້ນ ງ່າຍກວ່າການປະຖິ້ມຄວາມບາບ. ການທໍລະມານຮ່າງກາຍດ້ວຍການ ນຸ່ງເຄື່ອງທີ່ເຮັດດ້ວຍຜ້າກະສອບ, ການຕີຕົວເອງດ້ວຍແສ້ ແລະ ການຕິດສາຍໂສ້ນັ້ນ ງ່າຍກວ່າການ

ເອົາຄວາມປາຖະໜາຝ່າຍເນື້ອໜັງໄປຄຶງໄວ້ທີ່ໄມ້ກາງແຂນ. ແອກທີ່ຈິດໃຈຝ່າຍເນື້ອໜັງເຕັມໃຈແບກນັ້ນ ໜັກໜາແທ້ ເພື່ອຈະບໍ່ຕ້ອງຍອມຮັບແອກຂອງພຣະຄຣິສ. *{GC 567.3}*

ເໝືອນຊາວຢິວ

ຄຣິສຕະຈັກໂຣມ ແລະ ສາສະໜາຂອງຊາວຢິວໃນສະໄໝທີ່ພຣະຄຣິສສະເດັດມາຄັ້ງທຳອິດກໍມີ ຄວາມຄ້າຍຄືກັນຢ່າງເຫັນໄດ້ຊັດ. ໃນຂະນະທີ່ຊາວຢິວແອບລະເມີດຫຼັກການແຫ່ງພຣະບັນຍັດຂອງ ພຣະເຈົ້າທຸກປະການ, ພວກເຂົາພັດທຳທ່າເຄັ່ງຄັດຫຼາຍໃນການປະຕິບັດຕາມຫຼັກການເຫຼົ່ານັ້ນ, ໂດຍ ເພີ່ມພາລະ ແລະ ທຳນຽມຕ່າງໆ ທີ່ເຮັດໃຫ້ການປະຕິບັດຕາມນັ້ນ ກັບກາຍເປັນພາລະອັນໜັກໜ່ວງ ແລະ ເຈັບປວດ. ຊາວຢິວສະໄໝນັ້ນອ້າງວ່າ ຕົນເຄົາລົບນັບຖືພຣະບັນຍັດ, ໃນທຳນອງດຽວກັນ ພວກ ກາໂຕລິກໃນທຸກມື້ນີ້ກໍອ້າງວ່າ ຕົນເຄົາລົບນັບຖືໄມ້ກາງແຂນ. ພວກເຂົາຍົກຍ້ອງສັນຍະລັກແຫ່ງ ຄວາມທຸກທໍລະມານຂອງພຣະຄຣິສ, ແຕ່ໃນຂະນະດຽວກັນ ກໍປະຕິເສດພຣະອົງດ້ວຍການດຳລົງຊີວິດ ຂອງພວກເຂົາ. *{GC 568.1}*

ຄົນທີ່ສັດທາໃນສາສະໜາກາໂຕລິກມັກຈະຕິດໄມ້ກາງແຂນໄວ້ຕາມໂບດ, ແທ່ນບູຊາ ແລະ ເສື້ອ ຜ້າຂອງພວກເຂົາ. ໄມ້ກາງແຂນປາກົດຢູ່ທຸກບ່ອນ ແລະ ຖືກຍົກຍ້ອງນັບຖືຢ່າງເປີດເຜີຍ. ແຕ່ ຄຳສອນຂອງພຣະຄຣິສຖືກປົກປິດຢູ່ພາຍໃຕ້ທຳນຽມອັນໄຮ້ປະໂຫຍດ, ການຕີຄວາມໝາຍຜິດພ້ຽນໄປ ຈາກຄວາມຈິງ ແລະ ກົດລະບຽບທີ່ເຄັ່ງຄັດ. ຖ້ອຍຄຳຂອງພຣະຜູ້ຊ່ວຍໃຫ້ລອດກ່ຽວກັບພວກຢິວ ທີ່ມີໃຈແຂງກະດ້າງນັ້ນ ຍິ່ງມີຄວາມເໝາະສົມສຳລັບພວກຜູ້ນຳຂອງຄຣິສຕະຈັກໂຣມ; ພຣະອົງຊົງ ກ່າວວ່າ: “ພວກເຂົາມັດຂອງໜັກມາວາງເທິງບ່າຂອງປະຊາຊົນ, ສ່ວນພວກເຂົາແລ້ວ ແມ່ນແຕ່ນິ້ວ ກ້ອຍກໍບໍ່ຍອມຈັບຍົກໄປ.” (ມັດທາຍ 23:4). ຜູ້ທີ່ພະຍາຍາມດຳເນີນຊີວິດຢ່າງຖືກຕ້ອງກໍຕົກຢູ່ໃນ ຄວາມຢ້ານກົວຕະຫຼອດເວລາວ່າ ຕົນຈະເຮັດໃຫ້ພຣະເຈົ້າໂກດຮ້າຍ; ໃນຂະນະດຽວກັນ, ພວກຜູ້ມີ ຕຳແໜ່ງສູງໃນຄຣິສຕະຈັກ ຫຼາຍຄົນພັດດຳລົງຊີວິດຢູ່ຢ່າງຫຼູຫຼາ ແລະ ມີຄວາມສະໜຸກສະໜານຝ່າຍ ເນື້ອໜັງ. *{GC 568.2}*

ການຂາບໄຫວ້ຮູບເຄົາລົບ ແລະ ວັດຖຸສັກສິດ, ການອະທິຖານຂໍຄວາມຊ່ວຍເຫຼືອຈາກບັນດານັກບຸນ ທີ່ລ່ວງລັບໄປ ແລະ ການຍົກຍ້ອງເຊີດຊູສັນຕະປາປາ ແມ່ນອຸບາຍຂອງຊາຕານທີ່ຈະດຶງດູດຈິດໃຈຂອງ ຜູ້ຄົນໃຫ້ຫ່າງໄກຈາກພຣະເຈົ້າ ແລະ ພຣະບຸດຂອງພຣະອົງ. ເພື່ອເຮັດໃຫ້ການທຳລາຍສຳເລັດ, ມັນ ພະຍາຍາມດຶງຄວາມສົນໃຈຂອງພວກເຂົາອອກຈາກພຣະອົງ ຜູ້ທີ່ຈະນຳຄວາມລອດພົ້ນມາສູ່ພວກເຂົາ ໄດ້ແຕ່ພຽງຜູ້ດຽວ. ມັນຈະຊີ້ນຳພວກເຂົາໄປຫາສິ່ງໃດກໍໄດ້ ແທນທີ່ຈະໃສ່ໃຈກັບພຣະອົງຜູ້ທີ່ຊົງກ່າວ ວ່າ: “ບັນດາຜູ້ທີ່ເຮັດການໜັກໜ່ວງ ແລະ ແບກພາລະໜັກ ຈົ່ງມາຫາເຮົາ ແລະ ເຮົາຈະໃຫ້ພວກເຈົ້າ ໄດ້ຮັບຄວາມເຊົາເມື່ອຍ.” (ມັດທາຍ 11:28). *{GC 568.3}*

ຊາຕານພະຍາຍາມຢ່າງບໍ່ຢຸດຢັ້ງ ທີ່ຈະບິດເບືອນພຣະລັກສະນະຂອງພຣະເຈົ້າ, ທາດແທ້ຂອງ ຄວາມບາບ ແລະ ປະເດັນສຳຄັນຂອງການຕໍ່ສູ້ອັນຍິ່ງໃຫຍ່ລະຫວ່າງຊາຕານກັບພຣະຄຣິສ. ມັນ ໃຊ້ກົນອຸບາຍຫຼອກລວງ ເພື່ອເຮັດໃຫ້ພຣະບັນຍັດຂອງພຣະເຈົ້າມີຄວາມສຳຄັນໜ້ອຍລົງ ແລະ ໃຫ້ ມະນຸດເຮັດບາບຕາມໃຈມັກ. ໃນຂະນະດຽວກັນ, ມັນນຳພາພວກເຂົາໃຫ້ມີຄວາມເຂົ້າໃຈຜິດກ່ຽວກັບ ພຣະເຈົ້າ ຈົນພວກເຂົາຢ້ານກົວ ແລະ ກຽດຊັງພຣະອົງແທນທີ່ຈະຮັກພຣະອົງ. ມັນເອົາຄວາມ ໂຫດຮ້າຍທາລຸນທີ່ມີຢູ່ໃນອຸປະນິໄສຂອງມັນເອງ ມາປ້າຍສີພຣະຜູ້ສ້າງ. ຄວາມໂຫດຮ້າຍທາລຸນນັ້ນ ໄດ້ ກາຍເປັນສ່ວນໜຶ່ງຂອງລະບົບຄວາມເຊື່ອທາງສາສະໜາ ແລະ ຮູບແບບຕ່າງໆ ຂອງການນະມັດ-ສະການ. ດ້ວຍເຫດນີ້, ຊາຕານຈຶ່ງປິດບັງຈິດໃຈຂອງມະນຸດ ແລະ ໃຊ້ພວກເຂົາເປັນເຄື່ອງມືໃນ

ການຕໍ່ສູ້ກັບພຣະເຈົ້າ. ຍ້ອນຄວາມເຂົ້າໃຈຜິດກ່ຽວກັບພຣະລັກສະນະຂອງພຣະເຈົ້າ, ຊົນຊາດຕ່າງ ໆ ທີ່ບໍ່ຮູ້ຈັກພຣະອົງ ຈຶ່ງຖືກຊັກຈູງໃຫ້ເຊື່ອວ່າການເອົາມະນຸດໄປຂ້າບູຊາຍັນເປັນສິ່ງຈຳເປັນ ເພື່ອເຮັດໃຫ້ພຣະທີ່ພວກເຂົານັບຖືພໍໃຈພວກເຂົາ. ການກະທຳທີ່ໂຫດຮ້າຍຫາລຸນຫຼາຍຢ່າງ ໄດ້ເກີດຂຶ້ນພາຍໃຕ້ຮູບແບບຕ່າງ ໆ ຂອງການຂາບໄຫວ້ຮູບເຄົາລົບ. {GC 569.1}

ຄວາມໂຫດຮ້າຍຂອງໂຣມ

ຄຣິສຕະຈັກໂຣມັນກາໂຕລິກໄດ້ນຳເອົາຮູບແບບການນະມັດສະການຂອງຄົນທີ່ບໍ່ນັບຖືພຣະເຈົ້າ ມາປະສົມປົນເປກັບການນະມັດສະການແບບຄຣິສຕຽນ ຈົນພຣະລັກສະນະຂອງພຣະເຈົ້າຖືກບິດເບືອນ. ມີການໃຊ້ວິທີການທີ່ໂຫດຮ້າຍ ແລະ ໜ້າລັງກຽດໃນການນະມັດສະການພຣະເຈົ້າ ເໝືອນກັບລັດທິນອກສາສະໜາ. ໃນສະໄໝທີ່ຄຣິສຕະຈັກໂຣມມີອຳນາດສູງສຸດ, ມີເຄື່ອງທໍລະມານ ເພື່ອບັງຄັບໃຫ້ຄົນຍອມຮັບຫຼັກຄຳສອນຂອງພວກເຂົາ ແລະ ມີຫຼັກປະຫານສຳລັບຜູ້ທີ່ບໍ່ຍອມຈຳນົນຕໍ່ຂໍ້ກຳນົດຂອງຄຣິສຕະຈັກ. ຕົວເລກຈຳນວນຄົນທີ່ຖືກສັງຫານໝູ່ຈະບໍ່ມີຜູ້ໃດຮູ້ໄດ້ຈົນກວ່າຈະເຖິງວັນພິພາກສາ. ພວກຜູ້ນຳຄຣິສຕະຈັກໂຣມໄດ້ຮຽນຮູ້ຈາກຊາຕານຜູ້ເປັນນາຍຂອງພວກເຂົາ ເພື່ອຄິດຄົ້ນວິທີທໍລະມານທີ່ເຈັບປວດທີ່ສຸດ ໂດຍບໍ່ໃຫ້ເຫຍື່ອເສຍຊີວິດ. ຫຼາຍຄັ້ງການທໍລະມານທີ່ໂຫດຮ້າຍນີ້ໄດ້ດຳເນີນໄປຊ້ຳແລ້ວຊ້ຳອີກ ຈົນເຖິງຂີດທີ່ສັງຂານທົນຕໍ່ໄປບໍ່ໄດ້ ແລະ ຜູ້ທີ່ຖືກທໍລະມານ ຍິນດີຕ້ອນຮັບຄວາມຕາຍ ເໝືອນເປັນການປົດປ່ອຍທີ່ໜ້າຊື່ນຊົມ. {GC 569.2}

ນີ້ແມ່ນຈຸດຈົບຂອງຜູ້ທີ່ຕໍ່ຕ້ານຄຣິສຕະຈັກໂຣມ; ສ່ວນສະມາຊິກຄຣິສຕະຈັກກໍຖືກລົງໂທດດ້ວຍການຂ້ຽນຕີ, ຖືກບັງຄັບໃຫ້ອຶດຫິວ ແລະ ຖືກທໍລະມານຮ່າງກາຍທຸກຮູບແບບທີ່ໜ້າສະເທືອນໃຈ. ເພື່ອຈະໄດ້ຮັບຄວາມໂປດປານຈາກສະຫວັນ, ຜູ້ທີ່ສຳນຶກຜິດໄດ້ລະເມີດພຣະບັນຍັດຂອງພຣະເຈົ້າ ໂດຍການລະເມີດກົດທຳມະຊາດ. ພວກເຂົາຖືກສອນໃຫ້ທຳລາຍສາຍສຳພັນທີ່ພຣະເຈົ້າຊົງສ້າງຂຶ້ນເພື່ອອວຍພອນ ແລະ ໃຫ້ຄວາມສຸກແກ່ຊີວິດມະນຸດໃນໂລກນີ້. ສຸສານຂອງໂບດເຕັມໄປດ້ວຍຫຼຸມຝັງສົບຂອງເຫຍື່ອຫຼາຍລ້ານຄົນທີ່ໃຊ້ຊີວິດທັງໝົດໃນການພະຍາຍາມຂົ່ມຄວາມຮູ້ສຶກຕາມທຳມະຊາດຂອງຕົນ ແລະ ລະງັບທຸກຄວາມຄິດ ແລະ ຄວາມຮູ້ສຶກທີ່ເຫັນອົກເຫັນໃຈຕໍ່ເພື່ອນມະນຸດ ເພາະຄິດວ່າສິ່ງເຫຼົ່ານີ້ເປັນທີ່ໜ້າລັງກຽດຕໍ່ພຣະເຈົ້າ, ແຕ່ຄວາມພະຍາຍາມນັ້ນກໍເປົ່າປະໂຫຍດ. {GC 569.3}

ຖ້າ ພວກເຮົາ ຢາກ ເຂົ້າໃຈ ເຖິງ ຄວາມ ຈົ່ງໃຈ ໂຫດຮ້າຍ ຂອງ ຊາຕານ, ກໍ ໃຫ້ ພວກເຮົາ ພຽງ ແຕ່ ເບິ່ງ ປະຫວັດສາດຂອງລະບອບສັນຕະປາປາເທົ່ານັ້ນ. ຄວາມໂຫດຮ້າຍນີ້ໄດ້ສະແດງອອກມາເປັນເວລາຫຼາຍຮ້ອຍປີ ບໍ່ແມ່ນໃນທ່າມກາງຜູ້ທີ່ບໍ່ຮູ້ຈັກພຣະເຈົ້າ ແຕ່ໃນທຸກປະເທດທີ່ນັບຖືສາສະໜາຄຣິສເປັນຫຼັກ. ເຈົ້າແຫ່ງຄວາມຊົ່ວຮ້າຍໄດ້ໃຊ້ລະບົບຫຼອກລວງອັນໃຫຍ່ຫຼວງນີ້ ເພື່ອເຮັດໃຫ້ພຣະເຈົ້າເສຍພຣະກຽດ ແລະ ສ້າງຄວາມທຸກເວດທະນາໃຫ້ແກ່ມະນຸດ. ເມື່ອພວກເຮົາເຫັນວິທີທີ່ມັນອຳພາງຕົວເອງ ແລະ ສຳເລັດວຽກງານຂອງມັນຜ່ານບັນດາຜູ້ນຳຄຣິສຕະຈັກໂຣມ, ພວກເຮົາກໍຈະເຂົ້າໃຈດີຂຶ້ນວ່າ ເປັນຫຍັງມັນຈຶ່ງກຽດຊັງພຣະຄຳພີຫຼາຍແທ້. ເມື່ອອ່ານພຣະຄຳພີ, ຄົນຈະເຫັນພຣະເມດຕາ ແລະ ຄວາມຮັກຂອງພຣະເຈົ້າ; ຈະເຫັນວ່າພຣະອົງບໍ່ໄດ້ວາງພາລະອັນໜັກເຫຼົ່ານີ້ໃສ່ມະນຸດເລີຍ. ສິ່ງທີ່ພຣະອົງຊົງປາຖະໜາມີພຽງຢ່າງດຽວຄື ຈິດໃຈທີ່ສຳນຶກຜິດດ້ວຍຄວາມເສຍໃຈ ແລະ ການເຊື່ອຟັງດ້ວຍຄວາມນອບນ້ອມຖ່ອມຕົນ. {GC 570.1}

ຄຳສອນຈາກຍຸກມືດ

ບໍ່ມີແບບຢ່າງໃນຊີວິດຂອງພຣະຄຣິສໃຫ້ຜູ້ຊາຍ ຫຼື ຜູ້ຍິງໄປກັກຕົວເອງໃນສຳນັກສົງ ຫຼື ສຳນັກແມ່ຊີ ເພື່ອກຽມພ້ອມສຳລັບສະຫວັນ. ພຣະອົງບໍ່ເຄີຍສອນວ່າ ຄວາມຮັກ ແລະ ຄວາມເມດຕາຄວນຖືກກົດໄວ້. ພຣະໄທຂອງພຣະຜູ້ຊ່ວຍໃຫ້ລອດເຕັມລົ້ນດ້ວຍຄວາມຮັກ. ຍິ່ງມະນຸດກ້າວໄປສູ່ຄວາມດີພ້ອມທາງສິນທຳຫຼາຍເທົ່າໃດ, ຄວາມຮູ້ສຶກຂອງພວກເຂົາກໍຍິ່ງລະອຽດອ່ອນຫຼາຍຂຶ້ນເທົ່ານັ້ນ, ການຮັບຮູ້ເລື່ອງບາບກໍຍິ່ງຊັດເຈນ ແລະ ຄວາມເມດຕາຕໍ່ຜູ້ທີ່ຕົກທຸກໄດ້ຍາກກໍເລິກເຊິ່ງຍິ່ງຂຶ້ນ. ສັນຕະປາປາອ້າງວ່າ ຕົນເປັນຕົວແທນຂອງພຣະຄຣິສ, ແຕ່ອຸປະນິໄສຂອງເພິ່ນຄ້າຍຄືກັບພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາບໍ? ພຣະຄຣິສເຄີຍສັ່ງໃຫ້ຂັງຄົນໃນຄຸກ ຫຼື ເອົາໄປທໍລະມານ ຍ້ອນພວກເຂົາບໍ່ຍອມນະມັດສະການພຣະອົງໃນຖານະເຈົ້າຊີວິດແຫ່ງຟ້າສະຫວັນບໍ? ມີຄົນເຄີຍໄດ້ຍິນພຣະອົງສັ່ງປະຫານຊີວິດຜູ້ທີ່ບໍ່ຍອມຮັບພຣະອົງບໍ? ເມື່ອໄທບ້ານຊາວຊາມາເຣຍບໍ່ຕ້ອນຮັບພຣະອົງ, ອັກຄະສາວົກໂຢຮັນເຕັມໄປດ້ວຍຄວາມໂກດແຄ້ນ ຈຶ່ງຖາມວ່າ: “ພຣະອົງເຈົ້າເອີ້ຍ ພຣະອົງພໍພຣະໄທຈະໃຫ້ຂ້ານ້ອຍຂໍໄຟລົງມາຈາກສະຫວັນ ເຜົາຜານພວກເຂົາ ເໝືອນຢ່າງເອລີຢາໄດ້ກະທຳນັ້ນຫຼື?” ພຣະເຢຊູຊົງຫຼຽວເບິ່ງສາວົກຂອງພຣະອົງດ້ວຍຄວາມສົງສານ ແລ້ວກ່າວຕິຕຽນຈິດໃຈທີ່ຮ້າຍກາດຂອງເພິ່ນວ່າ: “ບຸດມະນຸດບໍ່ໄດ້ມາເພື່ອທຳລາຍຊີວິດມະນຸດ ແຕ່ມາເພື່ອຊ່ວຍເຂົາທັ້ງຫຼາຍໃຫ້ລອດ.” (ລູກາ 9:54, 56 ດັດແປງຈາກສະບັບ TKJV). ອຸປະນິໄສຂອງຜູ້ທີ່ອ້າງວ່າເປັນຕົວແທນຂອງພຣະຄຣິສ ຊ່າງແຕກຕ່າງຈາກອຸປະນິໄສຂອງພຣະອົງຫຼາຍພຽງໃດໜໍ! *{GC 570.2}*

ທຸກມື້ນີ້, ຄຣິສຕະຈັກໂຣມພະຍາຍາມປິດບັງປະຫວັດຄວາມຮຸນແຮງຂອງຕົນດ້ວຍການຂໍອະໄພ ເພື່ອສ້າງພາບລັກທີ່ດີຕໍ່ສາຍຕາຊາວໂລກ. ຄຣິສຕະຈັກໂຣມບໍ່ມີການປ່ຽນແປງ ເຖິງແມ່ນຈະອ້າງວ່າເຮັດຕາມແບບຢ່າງຂອງພຣະຄຣິສ. ຫຼັກການທັງໝົດຂອງລະບອບສັນຕະປາປາທີ່ເຄີຍຢຶດຖືໃນອະດີດ ກໍຍັງຢຶດຖືໃນປັດຈຸບັນ. ຫຼັກຄຳສອນທີ່ຖືກປະດິດຄິດຄົ້ນໃນສະໄໝຍຸກມືດ ກໍຍັງຄົງເຊື່ອຖືກັນຢູ່. ຢ່າໃຫ້ຜູ້ໃດຫຼົງເຂົ້າໃຈຜິດໃນເລື່ອງນີ້. ລະບອບສັນຕະປາປາທີ່ພວກໂປຣແຕັສຕັ້ງພາກັນນິຍົມຊົມຊອບໃນທຸກວັນນີ້ ກໍແມ່ນອັນດຽວກັນກັບທີ່ໄດ້ປົກຄອງໂລກໃນສະຕະວັດທີ 16 ເມື່ອມີການປະຕິຮູບສາສະໜາຄັ້ງໃຫຍ່. ໃນຄາວນັ້ນ, ຄົນຂອງພຣະເຈົ້າຍອມສ່ຽງຊີວິດ ເພື່ອເປີດໂປງຄວາມຊົ່ວຮ້າຍຂອງລະບອບນີ້. ຄຣິສຕະຈັກໂຣມຍັງຄົງມີຄວາມຈອງຫອງ ແລະ ການອວດອ້າງແບບດຽວກັນກັບໃນສະໄໝທີ່ຄຣິສຕະຈັກເຄີຍຄອບງຳບັນດາກະສັດ ແລະ ເຈົ້າແຂວງ ແລະ ອ້າງເອົາສິດອຳນາດທີ່ເປັນຂອງພຣະເຈົ້າ. ຄຣິສຕະຈັກໂຣມຍັງຄົງໂຫດຮ້າຍທາລຸນ ແລະ ກົດຂີ່ຂົ່ມເຫັງຄືເກົ່າ, ເໝືອນກັບໃນສະໄໝທີ່ໄດ້ທຳລາຍເສລີພາບຂອງມະນຸດ ແລະ ຂ້າໄພ່ພົນຂອງອົງຜູ້ຊົງຣິດທານຸພາບສູງສຸດ. *{GC 571.1}*

ລະບອບສັນຕະປາປາແມ່ນການປະຖິ້ມຄວາມເຊື່ອໃນຍຸກສຸດທ້າຍ ທີ່ພຣະຄຳພີໄດ້ພະຍາກອນໄວ້ລ່ວງໜ້າ. (ເບິ່ງ 2 ເທສະໂລນີກ 2:3, 4). ນະໂຍບາຍຂອງລະບອບນີ້ແມ່ນການແປງໂຕໄປຕາມສະພາບການເພື່ອໃຫ້ບັນລຸຈຸດປະສົງ; ແຕ່ພາຍໃຕ້ການອຳພາງຕົວນັ້ນ, ຄຣິສຕະຈັກໂຣມຍັງເຊື່ອງຊ່ອນພຶດຮ້າຍຂອງງູທີ່ບໍ່ມີວັນປ່ຽນແປງ. ພວກເຂົາປະກາດວ່າ: “ບໍ່ຈຳເປັນຕ້ອງຮັກສາຄຳໝັ້ນສັນຍາທີ່ໃຫ້ໄວ້ກັບຄົນນອກຮີດ ຫຼື ຜູ້ທີ່ຖືກສົງໄສວ່ານອກຮີດ.”[4] ອຳນາດນີ້ໄດ້ເຮັດໃຫ້ໄພ່ພົນຂອງພຣະເຈົ້າຕ້ອງຫຼັ່ງເລືອດມາເປັນເວລາພັນປີ, ແລ້ວພວກເຮົາຈະຍອມຮັບວ່າ ນີ້ແມ່ນສ່ວນໜຶ່ງຂອງຄຣິສຕະຈັກທີ່ແທ້ຈິງຂອງພຣະຄຣິສໄດ້ບໍ? *{GC 571.2}*

[4] ລອງຟອງ (Lenfant), ເຫຼັ້ມ 1, ໜ້າ 516.

ຝ່າຍໂປຣແຕັສຕັ້ງປ່ຽນໄປ

ບໍ່ແມ່ນເລື່ອງແປກທີ່ໃນບັນດາປະເທດໂປຣແຕັສຕັ້ງມີຄົນກ່າວວ່າ ນິກາຍກາໂຕລິກໃນທຸກມື້ນີ້ມີຄວາມແຕກຕ່າງຈາກໂປຣແຕັສຕັ້ງໜ້ອຍກວ່າແຕ່ກ່ອນ. ແທ້ຈິງແລ້ວມີການປ່ຽນແປງເກີດຂຶ້ນ ແຕ່ການປ່ຽນແປງນັ້ນບໍ່ໄດ້ເກີດຂຶ້ນກັບລະບອບສັນຕະປາປາ. ໃນປັດຈຸບັນກາໂຕລິກກັບໂປຣແຕັສຕັ້ງຄ້າຍຄືກັນຫຼາຍ ເພາະພວກໂປຣແຕັສຕັ້ງໄດ້ເສື່ອມໂຊມລົງຫຼາຍ ເມື່ອປຽບທຽບກັບສະໄໝຂອງພວກນັກປະຕິຮູບ. *{GC 571.3}*

ໃນຂະນະທີ່ບັນດາຄຣິສຕະຈັກໂປຣແຕັສຕັ້ງພະຍາຍາມເອົາໃຈຊາວໂລກ, ພວກເຂົາກັບຕາບອດຍ້ອນການໃຊ້ຄວາມເມດຕາໄປໃນທາງທີ່ຜິດ. ພວກເຂົາຫຼົງຜິດໄປຈົນເຫັນຄວາມຊົ່ວເປັນຄວາມດີ ແລະ ແນ່ນອນໃນທີ່ສຸດ ພວກເຂົາຈະເຫັນຄວາມດີວ່າເປັນຄວາມຊົ່ວ. ແທນທີ່ຈະປົກປ້ອງຄວາມເຊື່ອທີ່ໄດ້ມອບໄວ້ໃຫ້ໄພ່ພົນຂອງພຣະເຈົ້າແຕ່ດັ້ງເດີມ, ພວກເຂົາພັດໄປຂໍອະໄພທີ່ເຄີຍມີອະຄະຕິ ແລະ ເຄີຍດູໝິ່ນຄຣິສຕະຈັກໂຣມ. *{GC 571.4}*

ຜູ້ຄົນຈຳນວນຫຼາຍທີ່ບໍ່ເຫັນດີກັບຄຣິສຕະຈັກໂຣມ ກໍຍັງບໍ່ເຫັນອັນຕະລາຍຈາກອຳນາດ ແລະ ອິດທິພົນຂອງມັນ. ຫຼາຍຄົນຢືນຢັນວ່າຄວາມມືດມົນທາງດ້ານສະຕິປັນຍາ ແລະ ສິນທຳຂອງຍຸກກາງນັ້ນເປັນສາເຫດທີ່ຄຳສອນ, ຄວາມເຊື່ອງົມງວາຍ ແລະ ການກົດຂີ່ຂົ່ມເຫັງຂອງຄຣິສຕະຈັກໂຣມແຜ່ຂະຫຍາຍອອກໄປ. ພວກເຂົາເວົ້າວ່າ ສະຕິປັນຍາອັນສູງສົ່ງຂອງຍຸກສະໄໝໃໝ່, ການແຜ່ຂະຫຍາຍຂອງຄວາມຮູ້ ແລະ ການເພີ່ມຂຶ້ນຂອງເສລີພາບທາງສາສະໜາ ຈະປ້ອງກັນບໍ່ໃຫ້ການກົດຂີ່ຂົ່ມເຫັງ ແລະ ການປົກຄອງແບບຜະເດັດການກັບຄືນມາ. ເມື່ອມີຄົນເວົ້າວ່າສິ່ງເຫຼົ່ານີ້ຈະເກີດຂຶ້ນອີກກໍຖືກຄົນອື່ນຫົວຂວັນ ເພາະເຫັນວ່າຍຸກນີ້ເປັນຍຸກສະໄໝແຫ່ງຄວາມຮູ້. ເປັນຄວາມຈິງທີ່ວ່າ ແສງສະຫວ່າງອັນເຈີດຈ້າທາງດ້ານສະຕິປັນຍາ, ສິນທຳ ແລະ ສາສະໜາກຳລັງສ່ອງມາຍັງຄົນສະໄໝນີ້; ແສງສະຫວ່າງຈາກສະຫວັນໄດ້ຖືກເທລົງມາເທິງໂລກ ຜ່ານພຣະຄຳອັນບໍຣິສຸດຂອງພຣະເຈົ້າທີ່ເປີດອອກ. ແຕ່ພວກເຮົາຄວນຈື່ຈຳໄວ້ວ່າ ຍິ່ງມີແສງສະຫວ່າງຫຼາຍເທົ່າໃດ, ຜູ້ທີ່ປິດເປືອນ ແລະ ປະຕິເສດຄວາມສະຫວ່າງນັ້ນ ກໍຍິ່ງຕົກຢູ່ໃນຄວາມມືດຫຼາຍຂຶ້ນເທົ່ານັ້ນ. *{GC 572.1}*

ການສຶກສາພຣະຄຳພີດ້ວຍການອະທິຖານ ຈະເປີດເຜີຍໃຫ້ພວກໂປຣແຕັສຕັ້ງເຫັນລັກສະນະທີ່ແທ້ຈິງຂອງລະບອບສັນຕະປາປາ ແລະ ເຮັດໃຫ້ພວກເຂົາກຽດຊັງ ແລະ ຫຼີກໜີຈາກມັນ. ແຕ່ຫຼາຍຄົນຄິດວ່າຕົນສະຫຼາດຫຼາຍ ຈົນຮູ້ສຶກວ່າບໍ່ຈຳເປັນຕ້ອງຖ່ອມຕົວລົງ ແລະ ທູນຂໍໃຫ້ພຣະເຈົ້າຊົງນຳພາພວກເຂົາສູ່ຄວາມຈິງ. ເຖິງແມ່ນວ່າ ຄົນເຫຼົ່ານີ້ອວດອ້າງເລື່ອງຄວາມຮູ້ຂອງຕົນ, ພວກເຂົາກໍບໍ່ຮູ້ພຣະຄຳພີ ຫຼື ຣິດອຳນາດຂອງພຣະເຈົ້າ. ພວກເຂົາພະຍາຍາມລະງັບສຽງຟ້ອງຮ້ອງໃນໃຈ ໂດຍການເລືອກທາງທີ່ບໍ່ກ່ຽວຂ້ອງກັບຈິດວິນຍານ ແລະ ບໍ່ຕ້ອງຖ່ອມຕົວລົງ. ພວກເຂົາຕ້ອງການວິທີລືມພຣະເຈົ້າ ທີ່ເບິ່ງພາຍນອກເໝືອນເປັນການລະນຶກເຖິງພຣະອົງ. ລະບອບສັນຕະປາປາເໝາະສົມທີ່ຈະຕອບສະໜອງຄວາມຕ້ອງການຂອງຄົນເຫຼົ່ານີ້; ມັນເໝາະພໍດີກັບຄົນສອງປະເພດ ເຊິ່ງກວມເອົາເກືອບໝົດທຸກຄົນໃນໂລກ. ປະເພດທຳອິດ, ແມ່ນພວກທີ່ຄິດຈະອາໄສຄຸນງາມຄວາມດີຂອງຕົນ ເພື່ອຈະໄດ້ຮັບຄວາມລອດພົ້ນ; ສ່ວນປະເພດທີສອງ, ແມ່ນພວກທີ່ຢາກລອດພົ້ນໂດຍບໍ່ຍອມປະຖິ້ມຄວາມບາບ. ນີ້ແຫຼະຄືຄວາມລັບແຫ່ງອຳນາດຂອງລະບອບສັນຕະປາປາ. *{GC 572.2}*

ດັ່ງທີ່ໄດ້ກ່າວມາແລ້ວ, ລະບອບສັນຕະປາປາໄດ້ປະສົບຜົນສຳເລັດຢ່າງຍິ່ງໃນຍຸກສະໄໝທີ່ປະຊາຊົນງົມງວາຍ ແລະ ຂາດຄວາມຮູ້. ຕໍ່ຈາກນີ້ໄປ, ມັນຈະປະຈັກແຈ້ງວ່າ ໃນຍຸກສະໄໝທີ່ປະຊາຊົນມີຄວາມຮູ້ສູງ ລະບອບນີ້ກໍຈະປະສົບຜົນສຳເລັດເຊັ່ນກັນ. ໃນສະໄໝກ່ອນ ເມື່ອມະນຸດບໍ່ມີພຣະຄຳຂອງພຣະເຈົ້າ ແລະ ບໍ່ຮູ້ຈັກຄວາມຈິງ, ພວກເຂົາເໝືອນຄົນຕາບອດ ແລະ ຄົນຈຳນວນຫຼວງຫຼາຍໄດ້

ຕົກເປັນເຫຍື່ອໂດຍບໍ່ເຫັນກັບດັກທີ່ວາງໄວ້. ໃນຍຸກນີ້, ຫຼາຍຄົນຫຼົງລະເລີງໄປກັບຄຳສອນທີ່ມາຈາກ ຄວາມຄິດເຫັນຂອງມະນຸດທີ່ພວກເຂົາເອີ້ນວ່າ, “ວິຊາຄວາມຮູ້.” (1 ຕີໂມທຽວ 6:20). ພວກເຂົາບໍ່ເຫັນ ອັນຕະລາຍ ແລະ ກ້າວເຂົ້າໄປສູ່ກັບດັກໂດຍບໍ່ຮູ້ສຶກຕົວ. ຄວາມສາມາດທາງດ້ານສະຕິປັນຍາເປັນຂອງ ປະທານຈາກພຣະເຈົ້າ; ແລະພຣະອົງຊົງປາຖະໜາໃຫ້ເຮົານຳໃຊ້ໃນການສົ່ງເສີມຄວາມຈິງ ແລະ ຄວາມ ຊອບທຳ. ຢ່າງໃດກໍຕາມ, ເມື່ອຄົນສະຫຼາດທີ່ອວດອົ່ງທະນົງຕົວ, ມີຄວາມທະເຍີທະຍານ ແລະ ຍົກ ເອົາຄວາມຄິດຂອງຕົນເໜືອພຣະຄຳຂອງພຣະເຈົ້າ ກໍສາມາດສ້າງຄວາມເສຍຫາຍໄດ້ຫຼາຍກວ່າຄົນ ໂງ່. ໃນສະໄໝຍຸກມືດ, ການກີດກັນຄວາມຮູ້ເປັນເຫດໃຫ້ລະບອບສັນຕະປາປາປະສົບຜົນສຳເລັດ; ແລະໃນປັດຈຸບັນທີ່ “ວິຊາຄວາມຮູ້” ສອນສິ່ງທີ່ບໍ່ຈິງ ແລະ ທຳລາຍຄວາມເຊື່ອໃນພຣະຄຳພີ ກໍ ໄດ້ກຽມທາງໃຫ້ຄົນຍອມຮັບລະບອບສັນຕະປາປາ ພ້ອມດ້ວຍຮູບແບບທີ່ໜ້າດຶງດູດໃຈຂອງມັນເຊັ່ນ ກັນ. *{GC 572.3}*

ການຖືຮັກສາວັນອາທິດ

ການເຄື່ອນໄຫວຂອງກຸ່ມໂປຣແຕັສຕັງໃນອາເມຣິກາທີ່ດຳເນີນຢູ່ໃນເວລານີ້ເພື່ອໃຫ້ລັດຖະບານສະໜັບ-ສະໜູນສະຖາບັນ ແລະ ທຳນຽມປະຕິບັດຂອງຄຣິສຕະຈັກ ແມ່ນການຈະເລີນຮອຍຕາມລະບອບ ສັນຕະປາປາ. ບໍ່ພຽງເທົ່ານັ້ນ, ພວກເຂົາຍັງເປີດທາງໃຫ້ຝ່າຍສັນຕະປາປາຂຶ້ນມາມີອຳນາດສູງສຸດ ໃນອາເມຣິກາທີ່ເປັນປະເທດໂປຣແຕັສຕັງ ເຊິ່ງເປັນການກູ້ຄືນອຳນາດທີ່ຕົນໄດ້ສູນເສຍໄປໃນເອີຣົບ. ຈຸດສຳຄັນທີ່ສຸດໃນການເຄື່ອນໄຫວນີ້ ແມ່ນເປົ້າໝາຍຂອງພວກເຂົາທີ່ຢາກບັງຄັບໃຫ້ມີການຖືຮັກສາ ວັນອາທິດ ເຊິ່ງເປັນທຳນຽມຂອງຄຣິສຕະຈັກໂຣມ ແລະ ເປັນສິ່ງທີ່ຄຣິສຕະຈັກໂຣມອ້າງວ່າ ເປັນ ເຄື່ອງໝາຍແຫ່ງອຳນາດຂອງຕົນ. ແນວທາງຂອງລະບອບສັນຕະປາປາທີ່ຍຶດເອົາປະເພນີຂອງຊາວ ໂລກ ແລະ ຕັ້ງທຳນຽມຂອງມະນຸດໄວ້ເໜືອພຣະບັນຍັດຂອງພຣະເຈົ້າກຳລັງແຜ່ເຂົ້າໄປໃນຄຣິສຕະຈັກ ໂປຣແຕັສຕັງ. ດ້ວຍເຫດນີ້, ພວກເຂົາຈຶ່ງພາກັນຍົກຍ້ອງວັນອາທິດຄືກັບທີ່ລະບອບສັນຕະປາປາເຄີຍ ເຮັດ. *{GC 573.1}*

ຖ້າຢາກຮູ້ວິທີການທີ່ຈະຖືກນຳມາໃຊ້ໃນຄວາມຂັດແຍ້ງທີ່ໃກ້ຈະມາເຖິງ, ໃຫ້ເບິ່ງສິ່ງທີ່ຄຣິສຕະຈັກໂຣມ ເຄີຍເຮັດມາແລ້ວໃນອະດີດ. ຖ້າຢາກຮູ້ວ່າພວກກາໂຕລິກ ແລະ ໂປຣແຕັສຕັງທີ່ເຮັດຕາມກາໂຕລິກຈະ ປະຕິບັດຕໍ່ຄົນທີ່ບໍ່ຍອມຮັບຄຳສອນຂອງພວກເຂົາແນວໃດ, ກໍໃຫ້ເບິ່ງວິທີທີ່ຄຣິສຕະຈັກໂຣມເຄີຍປະຕິບັດ ຕໍ່ວັນສະບາໂຕ ແລະ ຜູ້ທີ່ຮັກສາວັນນັ້ນ. *{GC 573.2}*

ມີສາມຂັ້ນຕອນທີ່ເຮັດໃຫ້ວັນອາທິດ ເຊິ່ງເປັນວັນສັກສິດຂອງຄົນນອກສາສະໜາ ໄດ້ກາຍເປັນວັນ ສຳຄັນໃນວົງການຄຣິສຕຸນ ຄື: ຣາຊໂອງການ, ມະຕິຂອງສະພາຄຣິສຕະຈັກ ແລະ ກົດລະບຽບ ຂອງຄຣິສຕະຈັກທີ່ມີອຳນາດລັດໜູນຫຼັງ. ມາດຕະການຄັ້ງທຳອິດທີ່ບັງຄັບໃຫ້ຖືຮັກສາວັນອາທິດ ແມ່ນ ກົດໝາຍທີ່ປະກາດໃຊ້ໂດຍຈັກກະພັດຄອນສະຕັນຕິນ (ຄ.ສ. 321). ຣາຊໂອງການນີ້ກຳນົດໃຫ້ ຊາວເມືອງພັກຜ່ອນໃນ “ວັນອັນສັກສິດຂອງພຣະອາທິດ,” ແຕ່ອະນຸຍາດໃຫ້ຊາວຊົນນະບົດສືບຕໍ່ເຮັດວຽກ ກະສິກຳຂອງຕົນໄດ້. ເຖິງແມ່ນວ່າໂດຍແທ້ຈິງແລ້ວນີ້ເປັນກົດໝາຍຂອງຄົນນອກສາສະໜາ, ແຕ່ ຈັກກະພັດກໍບັງຄັບໃຊ້ມັນຫຼັງຈາກທີ່ເພິ່ນທຳທ່າຮັບເຊື່ອໃນສາສະໜາຄຣິສ. *{GC 574.1}*

ເອີເຊບີອັດ (Eusebius) ເປັນເຈົ້າຄະນະຄົນໜຶ່ງທີ່ປະຈົບປະແຈງບັນດາກະສັດ ແລະ ຈັກກະພັດ ແລະ ເປັນສະໜາຍສະໜິດຂອງຈັກກະພັດຄອນສະຕັນຕິນ. ເມື່ອປາກົດວ່າຣາຊໂອງການບໍ່ມີນ້ຳໜັກ ພຽງພໍທີ່ຈະມາຊົດໃຊ້ແທນສິດອຳນາດຂອງພຣະເຈົ້າໄດ້ ເພິ່ນຈຶ່ງອ້າງວ່າພຣະຄຣິສຊົງປ່ຽນວັນສະບາໂຕໄປ ເປັນວັນອາທິດ ແຕ່ບໍ່ໄດ້ໃຊ້ພຣະຄຳພີແມ່ນແຕ່ຂໍ້ດຽວໃນການສະໜັບສະໜູນຄຳສອນໃໝ່ນີ້. ເອີເຊບີອັດ

ເອງຍອມຮັບວ່າມັນບໍ່ຈິງໂດຍບໍ່ຮູ້ຕົວ ແລະ ໄດ້ຊີ້ໃຫ້ເຫັນຜູ້ທີ່ເປັນຕົ້ນເຫດທີ່ແທ້ຈິງຂອງການປ່ຽນແປງນີ້. ເພິ່ນກ່າວວ່າ: “ທຸກສິ່ງທີ່ເຄີຍເປັນໜ້າທີ່ຕ້ອງເຮັດໃນວັນສະບາໂຕນັ້ນ, *ພວກເຮົາ*ໄດ້ໂອນໄປໃສ່ວັນຂອງອົງພຣະຜູ້ເປັນເຈົ້າແລ້ວ;”[5] ແຕ່ຂໍ້ອ້າງເລື່ອງວັນອາທິດທີ່ຂາດເຫດຜົນສະໜັບສະໜູນນີ້ ໄດ້ເຮັດໃຫ້ຄົນກ້າລະເມີດວັນສະບາໂຕຂອງພຣະເຈົ້າ. ທຸກຄົນທີ່ຢາກໄດ້ຮັບກຽດຈາກຊາວໂລກກໍໄດ້ຍອມຮັບເອົາວັນອາທິດຕາມກະແສສັງຄົມ. *{GC 574.2}*

ເມື່ອລະບອບສັນຕະປາປາໄດ້ຮັບການສະຖາປະນາຢ່າງໝັ້ນຄົງແລ້ວ ວຽກງານຍົກຍໍວັນອາທິດກໍໄດ້ດຳເນີນຕໍ່ໄປ. ໃນຊ່ວງທຳອິດ, ປະຊາຊົນຍັງສາມາດເຮັດວຽກກະສິກຳໃນເວລາທີ່ບໍ່ໄດ້ເຂົ້າໂບດ ແລະ ວັນທີເຈັດກໍຍັງຖືວ່າເປັນວັນສະບາໂຕຢູ່. ແຕ່ກໍມີການປ່ຽນແປງເກີດຂຶ້ນຢ່າງຕໍ່ເນື່ອງ. ເຈົ້າໜ້າທີ່ຄຣິສຕະຈັກຖືກຫ້າມບໍ່ໃຫ້ພິຈາລະນາຄະດີຄວາມຂັດແຍ້ງຂອງຊາວບ້ານໃນວັນອາທິດ. ຫຼັງຈາກນັ້ນບໍ່ດົນ, ທຸກຄົນບໍ່ວ່າຈະມີຖານະໃດກໍຖືກຫ້າມບໍ່ໃຫ້ເຮັດວຽກທົ່ວໄປໃນວັນອາທິດ, ຖ້າຜູ້ທີ່ຝ່າຝືນບໍ່ແມ່ນທາດກໍຈະຖືກປັບໃໝ; ສ່ວນຂ້າທາດກໍຈະຖືກຂ້ຽນຕີ. ຕໍ່ມາມີຄຳສັ່ງວ່າ ຖ້າຄົນຮັ່ງມີຝ່າຝືນຈະຖືກລົງໂທດໂດຍການຢຶດຊັບສິນເຄິ່ງໜຶ່ງ ແລະ ສຸດທ້າຍຖ້າຍັງບໍ່ຍອມເຊື່ອຟັງກໍຈະຖືກບັງຄັບໃຫ້ເປັນທາດ. ສ່ວນຊົນຊັ້ນຕ່ຳຈະຖືກເນລະເທດຕະຫຼອດຊີວິດ. *{GC 574.3}*

ພວກເຂົາຍັງອ້າງເຖິງການອັດສະຈັນຕ່າງ ໆ ອີກດ້ວຍ. ໃນບັນດາເຫດການແປກປະຫຼາດນັ້ນ ມີລາຍງານວ່າຊາວນາຄົນໜຶ່ງກຳລັງຈະໄຖນາໃນວັນອາທິດ ເມື່ອລາວເອົາເຫຼັກຂູດມາທຳຄວາມສະອາດຄັນໄຖ ເຫຼັກນັ້ນກໍຕິດແໜ້ນຢູ່ໃນມືຂອງລາວ ແລະ ກໍຕິດຢ່າງນັ້ນເປັນເວລາສອງປີ; ເຮັດໃຫ້ລາວຕ້ອງທົນ “ດ້ວຍຄວາມເຈັບປວດ ແລະ ຄວາມອັບອາຍຢ່າງໃຫຍ່ຫຼວງ.”[6] *{GC 575.1}*

ຕໍ່ມາສັນຕະປາປາໄດ້ອອກຄຳສັ່ງວ່າ ບາດຫຼວງປະຈຳເຂດຕ້ອງຕັກເຕືອນຜູ້ທີ່ລະເມີດວັນອາທິດ ແລະ ບອກໃຫ້ພວກເຂົາເຂົ້າໂບດ ແລະ ອະທິຖານ; ບໍ່ດັ່ງນັ້ນ, ພວກເຂົາອາດຈະນຳຄວາມຫາຍະນະອັນໃຫຍ່ຫຼວງມາສູ່ຕົນເອງ ແລະ ເພື່ອນບ້ານ. ມີສະພາຄຣິສຕະຈັກໄດ້ອ້າງເຫດຜົນວ່າ ເພາະມີຄົນຖືກຟ້າຜ່າໃນຂະນະເຮັດວຽກໃນວັນອາທິດ ມັນຈຶ່ງຕ້ອງເປັນວັນສະບາໂຕ. ເຫດຜົນນີ້ໄດ້ຖືກນຳມາໃຊ້ຢ່າງແຜ່ຫຼາຍໃນເວລາຕໍ່ມາ, ແມ່ນແຕ່ໃນກຸ່ມໂປຣແຕັສຕັງເອງ. ພວກຜູ້ນຳຄຣິສຕະຈັກກ່າວວ່າ: “ເປັນທີ່ປະຈັກຢ່າງຈະແຈ້ງວ່າ ພຣະເຈົ້າບໍ່ພໍພຣະໄທຫຼາຍທີ່ພວກເຂົາບໍ່ຮັກສາວັນນີ້.” ຈາກນັ້ນ, ຈຶ່ງມີການຮຽກຮ້ອງໃຫ້ບັນດາບາດຫຼວງ ແລະ ສາສະໜາຈານ, ກະສັດ ແລະ ເຈົ້າແຂວງ ພ້ອມດ້ວຍປະຊາຊົນຜູ້ສັດຊື່ທັ້ງຫຼາຍ “ໃຊ້ຄວາມພະຍາຍາມ ແລະ ເອົາໃຈໃສ່ຢ່າງເຕັມທີ່ ເພື່ອຟື້ນຟູກຽດຂອງວັນນີ້ຄືນ ແລະ ເພື່ອຊື່ສຽງຂອງຄຣິສຕະສາສະໜາ ໃຫ້ມີການຖືຮັກສາວັນນັ້ນຢ່າງເຄັ່ງຄັດຫຼາຍຂຶ້ນໃນອະນາຄົດ.”[7] *{GC 575.2}*

ເມື່ອເຫັນວ່າຄຳສັ່ງຂອງສະພາຄຣິສຕະຈັກບໍ່ໄດ້ຜົນຢ່າງທີ່ຕ້ອງການ, ພວກຜູ້ນຳຄຣິສຕະຈັກຈຶ່ງຂໍຮ້ອງເຈົ້າໜ້າທີ່ລັດໃຫ້ອອກກົດໝາຍ ເພື່ອຂົ່ມຂູ່ປະຊາຊົນບໍ່ໃຫ້ເຮັດວຽກໃນວັນອາທິດ. ໃນກອງປະຊຸມສະພາທີ່ນະຄອນໂຣມ, ຄຳຕັດສິນເກົ່າທັງໝົດໄດ້ຮັບການຢືນຢັນດ້ວຍຄວາມເດັດດ່ຽວ ແລະ ຄວາມຈິງຈັງທີ່ໜັກແໜ້ນກວ່າເດີມ. ຄຳສັ່ງເຫຼົ່ານີ້ໄດ້ຖືກລວມເຂົ້າໃນກົດບັນຍັດຂອງຄຣິສຕະຈັກ ແລະ ຖືກບັງຄັບໃຊ້ໂດຍເຈົ້າໜ້າທີ່ຝ່າຍບ້ານເມືອງເກືອບທົ່ວທຸກປະເທດທີ່ຄົນສ່ວນຫຼາຍນັບຖືສາສະໜາຄຣິສ.[8] *{GC 575.3}*

---

[5] ໂຣເບີດ ຄັອກ (Robert Cox), *ກົດວັນສະບາໂຕ ແລະ ໜ້າທີ່ໃນວັນສະບາໂຕ*, ໜ້າ 538.

[6] ຟຣັນຊິສ ເວັສ (Francis West), *Historical and Practical Discourse on the Lord's Day*, ໜ້າ 174.

[7] ໂທມັດ ໂມເຣ (Thomas Morer), *ບົດສົນທະນາຫົກບົດ ກ່ຽວກັບນາມຊື່, ແນວຄິດ ແລະ ການຖືຮັກສາວັນຂອງອົງພຣະຜູ້ເປັນເຈົ້າ*, ໜ້າ 271.

[8] ເບິ່ງ ເຣລິນ, *ປະຫວັດວັນສະບາໂຕ*, ພາກ 2, ບົດ 5, ຂໍ້ 7.

ການທີ່ຄຣິສຕະຈັກໂຣມຂາດຫຼັກຖານຈາກພຣະຄຳພີເພື່ອສະໜັບສະໜຸນການຖືຮັກສາວັນອາທິດ ສ້າງຄວາມອັບອາຍບໍ່ໜ້ອຍ. ພຣະເຈົ້າຊົງສັ່ງໄວ້ຢ່າງຈະແຈ້ງວ່າ “ວັນທີເຈັດນັ້ນເປັນສະບາໂຕຂອງ ພຣະເຢໂຮວາພຣະເຈົ້າຂອງເຈົ້າ” (ອົບພະຍົບ 20:10 TKJV); ແຕ່ເມື່ອພວກອາຈານໄດ້ປະຖິ້ມ ວັນດັ່ງກ່າວ ເພື່ອໄປຖືວັນແຫ່ງດວງອາທິດ, ສະມາຊິກຈຶ່ງຕັ້ງຄຳຖາມວ່າ ເປັນຫຍັງຈຶ່ງເຮັດຢ່າງ ນັ້ນ. ເນື່ອງຈາກບໍ່ມີຫຼັກຖານສະໜັບສະໜຸນຈາກພຣະຄຳພີ, ພວກເຂົາຈຶ່ງຫາວິທີອື່ນມາໃຊ້. ໃນຕອນ ທ້າຍສະຕະວັດທີ 12 ຜູ້ສະໜັບສະໜຸນວັນອາທິດຄົນໜຶ່ງທີ່ມີຄວາມກະຕືລືລົ້ນສູງໄດ້ໄປຢ້ຽມຢາມ ຄຣິສຕະຈັກຕ່າງ ໆ ໃນປະເທດອັງກິດ ແຕ່ກໍຖືກຕໍ່ຕ້ານຈາກຜູ້ປົກປ້ອງຄວາມຈິງຢ່າງສັດຊື່. ເນື່ອງຈາກ ຄວາມພະຍາຍາມຂອງລາວບໍ່ໄດ້ເກີດຜົນ ລາວຈຶ່ງອອກຈາກປະເທດອັງກິດໄປຊົ່ວຄາວ ເພື່ອຊອກຫາ ວິທີບັງຄັບໃຫ້ຄົນເຊື່ອຟັງຄຳສອນຂອງຕົນ. ເມື່ອກັບມາ, ລາວກໍມີວິທີແກ້ບັນຫາທີ່ຊ່ວຍໃຫ້ລາວ ປະສົບຜົນສຳເລັດຫຼາຍຂຶ້ນ. ລາວໄດ້ນຳເອົາໜັງສືມ້ວນທີ່ອ້າງວ່າມາຈາກພຣະເຈົ້າໂດຍກົງ ເຊິ່ງມີ ຄຳສັ່ງໃຫ້ຖືຮັກສາວັນອາທິດພ້ອມດ້ວຍຄຳຂູ່ເຂັ່ນທີ່ໂຫດຮ້າຍ ເພື່ອເຮັດໃຫ້ຜູ້ທີ່ບໍ່ເຊື່ອຟັງເກີດຄວາມ ຢ້ານກົວ. ເອກະສານອັນມີຄ່ານີ້ເປັນຂອງປອມເໝືອນກັບວັນນະມັດສະການປອມທີ່ໜັງສືມ້ວນນັ້ນ ສະໜັບສະໜຸນ. ມີການອ້າງວ່າ ມັນຕົກລົງມາຈາກສະຫວັນ ແລະ ມີຄົນພົບເຫັນມັນໃນນະຄອນ ເຢຣູຊາເລັມຢູ່ເທິງແທ່ນບູຊາຂອງນັກບຸນຊີເມໂອນທີ່ເນີນພູໂກນໂກທາ. ແຕ່ຄວາມຈິງແລ້ວ ແຫຼ່ງກຳເນີດ ຂອງມັນແມ່ນຕຳນັກຂອງສັນຕະປາປາທີ່ນະຄອນໂຣມ. ໃນທຸກຍຸກທຸກສະໄໝ, ລະບອບສັນຕະປາປາ ຖືວ່າ ການຫຼອກລວງ ແລະ ການປອມແປງເອກະສານເພື່ອເພີ່ມອຳນາດ ແລະ ຄວາມຈະເລີນຂອງ ຄຣິສຕະຈັກ ເປັນສິ່ງທີ່ຖືກຕ້ອງ. *{GC 576.1}*

ເອກະສານປອມນັ້ນຫ້າມການອອກແຮງງານນັບຕັ້ງແຕ່ເວລາສາມໂມງແລງຂອງວັນເສົາຈົນເຖິງຕາເວັນ ຂຶ້ນຂອງວັນຈັນ. ພວກເຂົາອ້າງວ່າ ຂໍ້ຫ້າມດັ່ງກ່າວໄດ້ຮັບການຢືນຢັນດ້ວຍການອັດສະຈັນຫຼາຍຢ່າງ. ມີການແຕ່ງເລື່ອງຂຶ້ນວ່າ ຜູ້ທີ່ເຮັດວຽກເກີນເວລາທີ່ກຳນົດໄວ້ກໍເປັນອຳມະພາດ. ຄົນງານໃນໂຮງໂມ້ ແປ້ງຄົນໜຶ່ງພະຍາຍາມໂມ້ເຂົ້າສາລີຂອງຕົນ ແຕ່ແທນທີ່ຈະເຫັນແປ້ງ, ລາວກັບເຫັນເລືອດໄຫຼອອກ ມາ ແລະ ລໍ້ໂມ້ກໍຢຸດໝົດເຖິງແມ່ນວ່ານ້ຳຈະໄຫຼແຮງກໍຕາມ. ແມ່ຍິງຄົນໜຶ່ງເອົາແປ້ງດິບໃສ່ເຕົາອົບທີ່ ຮ້ອນຫຼາຍ ແຕ່ເມື່ອເອົາອອກມາແປ້ງນັ້ນກໍຍັງດິບຢູ່. ອີກຄົນໜຶ່ງມີແປ້ງທີ່ກຽມໄວ້ສຳລັບອົບໃນເວລາບ່າຍ ສາມໂມງ ແຕ່ຕັດສິນໃຈວ່າຈະເກັບໄວ້ຈົນເຖິງວັນຈັນ, ມື້ຕໍ່ມາລາວກໍພົບວ່າແປ້ງນັ້ນໄດ້ຖືກເຮັດເປັນກ້ອນ ເຂົ້າຈີ່ ແລະ ອົບສຸກແລ້ວດ້ວຍອຳນາດຂອງພຣະເຈົ້າ. ຜູ້ຊາຍຄົນໜຶ່ງອົບເຂົ້າຈີ່ຫຼັງຈາກສາມໂມງແລງໃນ ວັນເສົາ, ເມື່ອລາວຫັກເຂົ້າຈີ່ໃນຕອນເຊົ້າມື້ຕໍ່ມາກໍເຫັນເລືອດໄຫຼອອກມາ. ຜູ້ສະໜັບສະໜຸນວັນອາທິດ ພະຍາຍາມສ້າງຄວາມສັກສິດໃຫ້ກັບວັນດັ່ງກ່າວດ້ວຍການແຕ່ງນິຍາຍງົມງວາຍ ແລະ ປັ້ນເລື່ອງທີ່ເຫຼືອ ເຊື່ອເຊັ່ນນີ້.[9] *{GC 576.2}*

ໃນປະເທດສະກັອດແລນພວກເຂົາເຮັດຄືກັບໃນປະເທດອັງກິດ ໂດຍການເອົາສ່ວນໜຶ່ງຂອງວັນ ສະບາໂຕມາລວມກັບວັນອາທິດ ເພື່ອເຮັດໃຫ້ຄົນເຫັນຄວາມສຳຄັນຂອງວັນອາທິດຫຼາຍຂຶ້ນ. ແຕ່ເວລາ ທີ່ຕ້ອງຖືຮັກສານັ້ນແຕກຕ່າງກັນ. ກະສັດຂອງສະກັອດແລນອອກຣາຊໂອງການວ່າ: “ວັນເສົາຕັ້ງແຕ່ ທ່ຽງວັນເປັນຕົ້ນໄປຄວນຖືວ່າສັກສິດ” ແລະ ບໍ່ໃຫ້ຜູ້ໃດເຮັດວຽກທາງໂລກຕັ້ງແຕ່ເວລານັ້ນຈົນເຖິງເຊົ້າວັນ ຈັນ.[10] *{GC 577.1}*

ເຖິງແມ່ນ ຈະ ມີ ຄວາມ ພະຍາຍາມ ທຸກ ຮູບແບບ ເພື່ອ ສ້າງ ຄວາມ ສັກສິດ ໃຫ້ ແກ່ ວັນອາທິດ, ພວກ ກາໂຕລິກເອງກໍຍອມຮັບຢ່າງເປີດເຜີຍວ່າ ພຣະເຈົ້າຊົງເປັນຜູ້ແຕ່ງຕັ້ງວັນສະບາໂຕ ແລະ ຍອມຮັບວ່າ

[9] ເບິ່ງ ໂຣເຈີ ເດີ ໂຮເວເດັນ, *ປະຫວັດສາດປະຈຳປີ*, ເຫຼັ້ມ 2, ໜ້າ 526–530.
[10] ໂມເຣີ, ໜ້າ 290, 291.

ວັນອາທິດແມ່ນມະນຸດເປັນຜູ້ຕັ້ງຂຶ້ນ. ໃນສະຕະວັດທີ 16 ສະພາສັນຕະປາປາໄດ້ປະກາດຢ່າງຈະແຈ້ງ ວ່າ: “ຂໍໃຫ້ຄຣິສຕຽນທຸກຄົນຈົດຈຳໄວ້ວ່າ ພຣະເຈົ້າໄດ້ຊົງຕັ້ງວັນທີເຈັດໄວ້ ແລະ ທັງຊາວຢິວ ແລະ ທຸກ ຄົນທີ່ອ້າງວ່ານະມັດສະການພຣະເຈົ້າກໍໄດ້ຍອມຮັບ ແລະ ຖືຮັກສາວັນນີ້. ແຕ່ພວກເຮົາຊາວຄຣິສຕຽນ ໄດ້ປ່ຽນວັນສະບາໂຕນັ້ນມາເປັນວັນຂອງອົງພຣະຜູ້ເປັນເຈົ້າ.”[11] ຜູ້ທີ່ປ່ຽນແປງພຣະບັນຍັດຂອງພຣະເຈົ້າ ຕາມໃຈຕົນເອງນັ້ນ ຮູ້ເປັນຢ່າງດີວ່າພວກເຂົາກຳລັງເຮັດຫຍັງ. ພວກເຂົາຕັ້ງໃຈຍົກຕົນເອງຂຶ້ນເໜືອ ພຣະເຈົ້າ. *{GC 577.2}*

ໂທດສາຫັດ

ເຫດການທີ່ສະແດງເຖິງນະໂຍບາຍຂອງຄຣິສຕະຈັກໂຣມຕໍ່ຜູ້ທີ່ບໍ່ເຫັນດີກັບພວກເຂົາສາມາດເບິ່ງເຫັນ ໄດ້ຈາກການຂົ່ມເຫັງ ແລະ ການເຂັ່ນຂ້າຊາວໂວດົວທີ່ດຳເນີນໄປຢ່າງດົນນານ ເຊິ່ງມີຊາວໂວດົວບາງຄົນຖື ຮັກສາວັນສະບາໂຕ. ຄົນອື່ນ ໆ ກໍໄດ້ຮັບຄວາມທຸກທໍລະມານແບບດຽວກັນ ເພາະຄວາມສັດຊື່ທີ່ພວກເຂົາ ມີຕໍ່ພຣະບັນຍັດຂໍ້ທີສີ່. ປະຫວັດສາດຂອງຄຣິສຕະຈັກໃນເອທິໂອເປຍ[12] ມີຄວາມສຳຄັນເປັນພິເສດ. ໃນ ຍຸກມືດ, ຄົນໃນເອີຣົບພາກັນລືມຄຣິສຕຽນໃນອາຟຣິກາຕອນກາງ, ພວກເຂົາຈຶ່ງມີອິດສະຫຼະພາບໃນ ການນະມັດສະການເປັນເວລາຫຼາຍສະຕະວັດ. ແຕ່ໃນທີ່ສຸດ, ຄຣິສຕະຈັກໂຣມໄດ້ຮັບຮູ້ວ່າຄົນເຫຼົ່ານີ້ ມີຢູ່; ໃນບໍ່ຊ້າ, ຈັກກະພັດຂອງເອທິໂອເປຍຖືກລໍ້ລວງໃຫ້ຍອມຮັບວ່າ ສັນຕະປາປາເປັນຕົວແທນຂອງ ພຣະຄຣິສ. ຈາກນັ້ນ, ກໍຕ້ອງຍິນຍອມອີກຫຼາຍຂໍ້. ມີການອອກຣາຊໂອງການຫ້າມການຖືຮັກສາວັນ ສະບາໂຕ ພ້ອມດ້ວຍບົດລົງໂທດທີ່ຮຸນແຮງສຳລັບຜູ້ທີ່ຝ່າຝືນ.[13] ຢ່າງໃດກໍຕາມ, ການປົກຄອງແບບ ຜະເດັດການຂອງຄຣິສຕະຈັກໂຣມກາຍເປັນແອກອັນໜັກໜ່ວງ ຈົນຊາວເອທິໂອເປຍຕັດສິນໃຈປົດແອກ ນັ້ນອອກຈາກຄໍ. ຫຼັງຈາກການຕໍ່ສູ້ອັນໂຫດຮ້າຍ, ຝ່າຍຂອງສັນຕະປາປາຖືກຂັບໄລ່ອອກຈາກດິນແດນ ຂອງຊາວເອທິໂອເປຍ ແລະ ມີການຟື້ນຟູຄວາມເຊື່ອດັ້ງເດີມ. ຄຣິສຕະຈັກທັ້ງຫຼາຍໃນເອທິໂອເປຍ ພາກັນດີໃຈໃນອິດສະຫຼະພາບທີ່ໄດ້ຮັບ, ພວກເຂົາບໍ່ເຄີຍລືມບົດຮຽນກ່ຽວກັບການຫຼອກລວງ, ຄວາມເຊື່ອ ທີ່ຜິດພ້ຽນ ແລະ ອຳນາດກົດຂີ່ຂອງຄຣິສຕະຈັກໂຣມ. ພວກເຂົາພໍໃຈທີ່ຈະບໍ່ພົວພັນກັບປະເທດ ອື່ນ ແລະ ບໍ່ເປັນທີ່ຮູ້ຈັກຂອງຄຣິສຕຽນກຸ່ມອື່ນໃນໂລກ. *{GC 577.3}*

ຄຣິສຕະຈັກທັ້ງຫຼາຍໃນອາຟຣິກາຖືຮັກສາວັນສະບາໂຕຄືກັບຄຣິສຕະຈັກໂຣມກ່ອນການປະຖິ້ມ ຄວາມເຊື່ອຢ່າງສົມບູນ. ພວກເຂົາຖືຮັກສາວັນທີເຈັດຕາມພຣະບັນຍັດຂອງພຣະເຈົ້າ ແລະ ພັກ ຈາກວຽກງານໃນວັນອາທິດຕາມທຳນຽມຂອງຄຣິສຕະຈັກ. ເມື່ອໄດ້ອຳນາດສູງສຸດ, ຄຣິສຕະຈັກ ໂຣມໄດ້ລະເມີດວັນສະບາໂຕຂອງພຣະເຈົ້າ ເພື່ອຍົກຍ້ອງວັນຂອງຕົນ. ແຕ່ບັນດາຄຣິສຕະຈັກໃນ ອາຟຣິກາຖືກເຊື່ອງໄວ້ເກືອບພັນປີ ແລະ ບໍ່ໄດ້ມີສ່ວນໃນການປະຖິ້ມຄວາມເຊື່ອນີ້. ເມື່ອຕົກຢູ່ໃຕ້ ອຳນາດຂອງຄຣິສຕະຈັກໂຣມ, ພວກເຂົາຖືກບັງຄັບໃຫ້ປະຖິ້ມວັນສະບາໂຕທີ່ແທ້ຈິງ ແລະ ຍົກຍ້ອງ ວັນອາທິດ. ແຕ່ທັນທີທີ່ໄດ້ຮັບອິດສະຫຼະພາບຄືນ, ພວກເຂົາກໍກັບມາຖືຮັກສາຕາມພຣະບັນຍັດຂໍ້ທີ ສີ່. *{GC 578.1}*

ປະຫວັດສາດເຫຼົ່ານີ້ໄດ້ສະແດງໃຫ້ເຫັນຢ່າງຊັດເຈນເຖິງຄວາມກົງດຊັງຂອງຄຣິສຕະຈັກໂຣມຕໍ່ວັນ ສະບາໂຕທີ່ແທ້ຈິງ ແລະ ຜູ້ປົກປ້ອງມັນ ພ້ອມດ້ວຍວິທີການທີ່ພວກເຂົາໃຊ້ເພື່ອໃຫ້ກົງດແກ່ວັນ

---

[11] *ອ້າງອີງຈາກທີ່ດຽວກັນ*, ໜ້າ 281, 282.

[12] ຕົ້ນສະບັບໃຊ້ຄຳວ່າ Ethiopia and Abyssinia ເຊິ່ງໃນປັດຈຸບັນແມ່ນເອທິໂອເປຍ.

[13] ເບິ່ງ ໄມເຄິນ ເກັດເດສ, *ປະຫວັດສາດຄຣິສຕະຈັກໃນເອທິໂອເປຍ*, ໜ້າ 311, 312.

ທີ່ພວກເຂົາຕັ້ງຂຶ້ນ. ພຣະຄຳຂອງພຣະເຈົ້າສອນວ່າ ເຫດການເຫຼົ່ານີ້ຈະເກີດຂຶ້ນອີກເມື່ອຊາວໂຣມັນ ກາໂຕລິກ ແລະ ໂປຣແຕັສຕັ້ງຮ່ວມມືກັນເພື່ອຍົກຍ້ອງວັນອາທິດ. *{GC 578.2}*

ສັດຮ້າຍທີ່ມີເຂົາຄືແກະນ້ອຍ

ຄຳພະຍາກອນໃນພຣະທຳພຣະນິມິດບົດທີ 13 ກ່າວວ່າ ອຳນາດຂອງສັດຮ້າຍທີ່ມີເຂົາເໝືອນແກະ ນ້ອຍນັ້ນຈະ “ເຮັດໃຫ້ໂລກກັບຄົນທັງຫຼາຍທີ່ຢູ່ໃນແຜ່ນດິນໂລກ” ຂາບໄຫວ້ຕໍ່ລະບອບສັນຕະປາປາ ເຊິ່ງ ພຣະນິມິດໃຊ້ເສືອດາວເປັນສັນຍະລັກຂອງລະບອບນີ້. ສັດທີ່ມີເຂົາເໝືອນແກະນ້ອຍຈະກ່າວແກ່ “ຄົນ ທັງຫຼາຍທີ່ຢູ່ໃນແຜ່ນດິນໂລກ . . . ໃຫ້ພວກເຂົາສ້າງຮູບຈຳລອງຂຶ້ນ ເພື່ອເປັນກຽດແກ່ສັດຮ້າຍ” ທີ່ຄ້າຍເສືອ ດາວ. ນອກຈາກນັ້ນ, ມັນຈະສັ່ງຄົນທັງປວງ “ທັງຜູ້ໃຫຍ່ ແລະ ຜູ້ນ້ອຍ, ຄົນຮັ່ງມີ ແລະ ຄົນຍາກຈົນ, ຂ້າທາດ ຫຼື ອິດສະຫຼະ” ໃຫ້ຮັບເຄື່ອງໝາຍຂອງສັດຮ້າຍ. (ພຣະນິມິດ 13:11–16 LCV). ໄດ້ມີການ ພິສູດແລ້ວວ່າ ສັດຮ້າຍທີ່ມີເຂົາເໝືອນແກະນ້ອຍໝາຍເຖິງສະຫະລັດອາເມຣິກາ. ຄຳພະຍາກອນນີ້ຈະ ສຳເລັດເມື່ອອາເມຣິກາບັງຄັບໃຫ້ຄົນທັງຫຼາຍຖືຮັກສາວັນອາທິດ, ເຊິ່ງຄຣິສຕະຈັກໂຣມອ້າງວ່າ ເປັນ ເຄື່ອງໝາຍພິເສດທີ່ສະແດງເຖິງອຳນາດສູງສຸດຂອງຕົນ. ແຕ່ອາເມຣິກາຈະບໍ່ແມ່ນປະເທດດຽວທີ່ຈະໃຫ້ ກຽດແກ່ລະບອບສັນຕະປາປາໃນເລື່ອງການບັງຄັບໃຫ້ຮັກສາວັນອາທິດ. ຄຣິສຕະຈັກໂຣມຍັງມີອິດທິພົນ ເໜືອບັນດາປະເທດທີ່ເຄີຍຢູ່ພາຍໃຕ້ການປົກຄອງຂອງພວກເຂົາ. ຍິ່ງໄປກວ່ານັ້ນ, ຄຳພະຍາກອນ ໄດ້ທຳນວາຍເຖິງການຟື້ນຟູອຳນາດຂອງລະບອບສັນຕະປາປາ ໂດຍກ່າວວ່າ: “ຫົວໜຶ່ງໃນບັນດາຫົວ ຂອງສັດຮ້າຍ ເບິ່ງເໝືອນກັບວ່າ ຖືກຟັນເຖິງແກ່ຄວາມຕາຍແລ້ວ, ແຕ່ບາດແຜອັນໜ້າຈະຕາຍ ນັ້ນ ໄດ້ຮັບການປິ່ນປົວໃຫ້ຫາຍດີແລ້ວ. ຄົນທັງໂລກຕ່າງກໍປະຫຼາດໃຈ ແລະ ໄດ້ຕິດຕາມສັດຮ້າຍໂຕ ນີ້.” (ພຣະນິມິດ 13:3). ບາດແຜເຖິງຕາຍນັ້ນ ຊີ້ເຖິງການໂຄ່ນອຳນາດຂອງລະບອບສັນຕະປາປາໃນ ປີ 1798. ຫຼັງຈາກນັ້ນ, ຜູ້ເຜີຍພຣະທຳກ່າວວ່າ: “ບາດແຜອັນໜ້າຈະຕາຍນັ້ນ ໄດ້ຮັບການປິ່ນປົວໃຫ້ ຫາຍດີແລ້ວ. ຄົນທັງໂລກຕ່າງກໍປະຫຼາດໃຈ ແລະ ໄດ້ຕິດຕາມສັດຮ້າຍໂຕນີ້.” ອາຈານໂປໂລກ່າວຢ່າງ ຈະແຈ້ງວ່າ “ຜູ້ຊົ່ວຮ້າຍ” ຈະສືບຕໍ່ຢູ່ຈົນເຖິງການສະເດັດມາຄັ້ງທີສອງຂອງພຣະຄຣິສ. (2 ເທສະໂລນິກ 2:3–8). ມັນຈະສືບຕໍ່ການດຳເນີນວຽກງານຫຼອກລວງຈົນເຖິງເວລາສຸດທ້າຍ. ໂຢຮັນຂຽນໃນພຣະທຳ ພຣະນິມິດກ່ຽວກັບລະບອບສັນຕະປາປາວ່າ: “ບັນດາຄົນທັງໝົດທີ່ຢູ່ໃນໂລກຈະບູຊາສັດຮ້າຍນັ້ນ ຄືທຸກ ຄົນທີ່ບໍ່ມີຊື່ຈົດໄວ້ໃນທະບຽນແຫ່ງຊີວິດ.” (ພຣະນິມິດ 13:8). ເຖິງແມ່ນວ່າ ການຖືຮັກສາວັນອາທິດນັ້ນ ມາຈາກອຳນາດຂອງຄຣິສຕະຈັກໂຣມັນກາໂຕລິກເທົ່ານັ້ນ, ແຕ່ຄົນທັງໃນທະວີບເອີຣົບ ແລະ ອາເມຣິກາ ຈະໃຫ້ກຽດແກ່ລະບອບສັນຕະປາປາ ໂດຍການຖືຮັກສາວັນດັ່ງກ່າວ. *{GC 578.3}*

ນັບຕັ້ງແຕ່ກາງສະຕະວັດທີ 19, ບັນດາຜູ້ສຶກສາຄຳພະຍາກອນໃນອາເມຣິກາໄດ້ປະກາດເລື່ອງນີ້ ແກ່ຊາວໂລກ. ເຫດການທີ່ກຳລັງເກີດຂຶ້ນໃນປັດຈຸບັນສະແດງໃຫ້ເຫັນວ່າ ຄຳພະຍາກອນນັ້ນກຳລັງຈະ ສຳເລັດຢ່າງໄວວາ. ອາຈານຝ່າຍໂປຣແຕັສຕັງກໍອ້າງພຣະເຈົ້າໃນການຮັກສາວັນອາທິດ ໃນຂະນະທີ່ ຂາດຫຼັກຖານຈາກພຣະຄຳພີ ເຊິ່ງບໍ່ຕ່າງຫຍັງກັບຜູ້ນຳຝ່າຍກາໂຕລິກທີ່ເຄີຍແຕ່ງເລື່ອງການອັດສະຈັນ ຂຶ້ນມາທົດແທນການທີ່ພວກເຂົາບໍ່ມີພຣະບັນຍັດຂອງພຣະເຈົ້າ. ມີຄົນກ່າວອ້າງມາແລ້ວ ແລະ ຈະ ມີຄົນກ່າວຕໍ່ໄປໃນອະນາຄົດອີກວ່າ ພຣະເຈົ້າສົ່ງໄພພິບັດລົງມາລົງໂທດມະນຸດຍ້ອນພວກເຂົາລະເມີດ ວັນອາທິດ, ບາງຄົນກໍເລີ່ມກ່າວຫາໃນເລື່ອງນີ້ແລ້ວ. ຂະບວນການບັງຄັບໃຫ້ຖືຮັກສາວັນອາທິດກຳລັງ ຂະຫຍາຍຕົວຢ່າງໄວວາ. *{GC 579.1}*

ຄຣິສຕະຈັກໂຣມມີຄວາມສະຫຼາດຫຼັກແຫຼມໃນການວາງແຜນ; ພວກເຂົາສາມາດຮູ້ລ່ວງໜ້າວ່າຈະ ເກີດຫຍັງຂຶ້ນ. ພວກເຂົາລໍຖ້າເວລາລົງມືຍ້ອນເຫັນວ່າ ບັນດາຄຣິສຕະຈັກໂປຣແຕັສຕັງກຳລັງໃຫ້ກຽດ

ພວກເຂົາ ໂດຍການຍອມຮັບເອົາວັນສະບາໂຕປອມ; ນອກຈາກນັ້ນ, ກໍເຫັນວ່າພວກໂປຣແຕັສຕັງກໍາລັງ ກຽມຕົວບັງຄັບໃຫ້ຖືຮັກສາວັນອາທິດດ້ວຍວິທີການດຽວກັນກັບທີ່ຄຣິສຕະຈັກໂຣມເຄີຍໃຊ້ໃນອະດີດ. ຜູ້ ທີ່ປະຕິເສດແສງແຫ່ງຄວາມຈິງຈະຂໍຄວາມຊ່ວຍເຫຼືອຈາກລະບອບສັນຕະປາປາທີ່ອວດອ້າງວ່າບໍ່ມີຄວາມ ຜິດພາດ ເພື່ອຍົກຍ້ອງວັນທີ່ລະບອບນັ້ນໄດ້ຕັ້ງຂຶ້ນ. ບໍ່ຍາກທີ່ຈະຄາດເດົາວ່າ ຄຣິສຕະຈັກໂຣມຈະເຕັມ ໃຈຊ່ວຍເຫຼືອພວກໂປຣແຕັສຕັງໃນວຽກງານນີ້ຫຼາຍພຽງໃດ. ໃຜຈະເຂົ້າໃຈວິທີຈັດການກັບຜູ້ທີ່ບໍ່ເຊື່ອຟັງ ຄຣິສຕະຈັກດີກວ່າບັນດາຜູ້ນໍາຂອງລະບອບສັນຕະປາປາ? *{GC 580.1}*

ສາສະໜາຈັກໂຣມັນກາໂຕລິກພ້ອມດ້ວຍເຄືອຂ່າຍທົ່ວໂລກເປັນອົງການຈັດຕັ້ງມະຫົມາທີ່ຢູ່ພາຍໃຕ້ ການຄວບຄຸມ ແລະ ຮັບໃຊ້ຜົນປະໂຫຍດຂອງລະບອບສັນຕະປາປາ. ສະມາຊິກຫຼາຍລ້ານຄົນທົ່ວໂລກໄດ້ ຖືກສອນໃຫ້ຈົງຮັກພັກດີຕໍ່ສັນຕະປາປາ. ບໍ່ວ່າພວກເຂົາຈະສັງກັດຢູ່ຊາດໃດ ຫຼື ຢູ່ພາຍໃຕ້ລັດຖະບານ ໃດ ພວກເຂົາຕ້ອງຖືວ່າອໍານາດຂອງຄຣິສຕະຈັກໂຣມສູງກວ່າອໍານາດອື່ນໃດທັງໝົດ. ເຖິງແມ່ນວ່າ ພວກເຂົາໄດ້ສາບານວ່າຈະຈົງຮັກພັກດີຕໍ່ລັດຂອງຕົນ, ແຕ່ເບື້ອງຫຼັງຄໍາສາບານນັ້ນ ແມ່ນຄໍາໝັ້ນ ສັນຍາທີ່ຈະເຊື່ອຟັງຄຣິສຕະຈັກໂຣມ, ເຊິ່ງລົບລ້າງຄໍາສາບານອື່ນທີ່ອາດຂັດກັບຜົນປະໂຫຍດຂອງ ຄຣິສຕະຈັກ. *{GC 580.2}*

ປະຫວັດສາດໄດ້ເປັນພະຍານເຖິງຄວາມພະຍາຍາມອັນສະຫຼາດຫຼັກແຫຼມ ແລະ ບໍ່ລົດລະຂອງ ຄຣິສຕະຈັກໂຣມໃນການແຊກແຊງກິດຈະການຂອງບັນດາປະເທດຕ່າງ ໆ. ເມື່ອໄດ້ສ້າງຖານອໍານາດ ແລ້ວ ພວກເຂົາກໍຈະສະແຫວງຫາຜົນປະໂຫຍດຕື່ມອີກ, ເຖິງແມ່ນວ່າ ຈະເປັນການທໍາລາຍຜູ້ປົກຄອງ ແລະ ປະຊາຊົນກໍຕາມ. ໃນປີ ຄ.ສ. 1204, ສັນຕະປາປາອິນໂນເຊັນທີ 3 ໄດ້ບັງຄັບໃຫ້ປີເຕີ ທີ 2, ກະສັດແຫ່ງອາຣາກອນ, ສາບານດັ່ງນີ້ວ່າ: "ຂ້າພະເຈົ້າ, ປີເຕີ, ກະສັດແຫ່ງອາຣາກອນ, ຂໍ ປະຕິຍານ ແລະ ສັນຍາວ່າ ຈະຈົງຮັກພັກດີ ແລະ ເຊື່ອຟັງຢ່າງສະເໝີຕົ້ນສະເໝີປາຍຕໍ່ເຈົ້ານາຍຂອງ ຂ້າພະເຈົ້າ ສັນຕະປາປາອິນໂນເຊັນ ແລະ ຜູ້ສືບທອດຕໍາແໜ່ງຂອງເພິ່ນ ແລະ ຕໍ່ຄຣິສຕະຈັກໂຣມັນ ກາໂຕລິກ ແລະ ຈະປົກປັກຮັກສາຣາຊອານາຈັກຂອງຂ້າພະເຈົ້າພາຍໃຕ້ການເຊື່ອຟັງເພິ່ນ, ປົກປ້ອງ ຄວາມເຊື່ອແບບກາໂຕລິກ ແລະ ປາບປາມພວກນອກຮີດ."[14] ສິ່ງນີ້ສອດຄ່ອງກັບການອ້າງສິດຂອງ ສັນຕະປາປາທີ່ວ່າ: "ເພິ່ນມີອໍານາດປົດຈັກກະພັດໄດ້" ແລະ "ເພິ່ນສາມາດປົດປ່ອຍໄພ່ພົນອອກຈາກ ຄວາມຈົງຮັກພັກດີຕໍ່ຜູ້ປົກຄອງທີ່ບໍ່ຊອບທໍາ."[15] *{GC 580.3}*

ຢ່າລືມວ່າຄຣິສຕະຈັກໂຣມອວດອ້າງວ່າພວກເຂົາບໍ່ເຄີຍປ່ຽນແປງ. ຫຼັກການທີ່ພວກເຂົາໃຊ້ໃນສະໄໝ ຂອງສັນຕະປາປາເກັກກໍຣີທີ 7 ແລະ ອິນໂນເຊັນທີ 3 ກໍຍັງຄົງເປັນຫຼັກການຂອງຄຣິສຕະຈັກໂຣມັນ ກາໂຕລິກໃນປັດຈຸບັນ. ຖ້າມີອໍານາດ, ພວກເຂົາຈະນໍາຫຼັກການເຫຼົ່ານີ້ມາໃຊ້ຢ່າງເຕັມກໍາລັງເໝືອນ ໃນຫຼາຍສະຕະວັດທີ່ຜ່ານມາ. ຊາວໂປຣແຕັສຕັງບໍ່ຮູ້ເລີຍວ່າກໍາລັງເຮັດຫຍັງເມື່ອພວກເຂົາສະເໜີຮັບ ການຊ່ວຍເຫຼືອຈາກຄຣິສຕະຈັກໂຣມໃນວຽກງານຍົກຍ້ອງວັນອາທິດ. ໃນຂະນະທີ່ພວກເຂົາພະຍາຍາມ ເຮັດໃຫ້ຈຸດປະສົງຂອງຕົນສໍາເລັດ, ຄຣິສຕະຈັກໂຣມກໍຕັ້ງເປົ້າທີ່ຈະຟື້ນຟູອໍານາດຂອງຕົນ ແລະ ກູ້ ຄືນຄວາມຍິ່ງໃຫຍ່ທີ່ເສຍໄປ. ຖ້າຫຼັກການນີ້ເປັນທີ່ຍອມຮັບໃນສະຫະລັດອາເມຣິກາວ່າ ຄຣິສຕະຈັກ ສາມາດໃຊ້ອໍານາດລັດ ຫຼື ຄວບຄຸມອໍານາດລັດ, ຖ້າກົດໝາຍບ້ານເມືອງສາມາດບັງຄັບໃຫ້ປະຕິບັດ ຕາມຂໍ້ກໍານົດຂອງສາສະໜາ, ເວົ້າສັ້ນ ໆ ກໍຄື ຖ້າອໍານາດຄຣິສຕະຈັກ ແລະ ອໍານາດລັດຖືກໃຊ້ໃນ ການຄວບຄຸມຈິດສໍານຶກຂອງປະຊາຊົນ, ໄຊຊະນະຂອງຄຣິສຕະຈັກໂຣມໃນປະເທດອາເມຣິກາກໍແນ່ນອນ ແລ້ວ. *{GC 581.1}*

---

[14] ຈອນ ດາວລິງ (John Dowling), *ປະຫວັດສາດຂອງລະບອບໂຣມ*, ເຫຼັ້ມ 5, ບົດ 6, ຂໍ້ 55.

[15] ໂມເຊນ, ເຫຼັ້ມ 3, ສະຕະວັດທີ 11, ພາກ 2, ບົດ 2, ຂໍ້ 9, ໝາຍເຫດ 17.

ພຣະຄຳຂອງພຣະເຈົ້າໄດ້ເຕືອນເຖິງອັນຕະລາຍທີ່ໃກ້ຈະເກີດຂຶ້ນ. ຖ້າບໍ່ເອົາໃຈໃສ່ຕໍ່ຄຳເຕືອນນີ້, ຊາວໂປຣແຕັສຕັ້ງຈະຮູ້ເຖິງຈຸດປະສົງທີ່ແທ້ຈິງຂອງຄຣິສຕະຈັກໂຣມ ກໍຕໍ່ເມື່ອມັນສາຍເກີນໄປທີ່ຈະຫຼົບໜີຈາກກັບດັກຂອງພວກເຂົາໄດ້. ຄຣິສຕະຈັກໂຣມກຳລັງຂະຫຍາຍອຳນາດຢ່າງງຽບ ໆ. ຄຳສອນຂອງພວກເຂົາກຳລັງມີອິດທິພົນໃນສະພານິຕິບັນຍັດ, ໃນບັນດາຄຣິສຕະຈັກ ແລະ ໃນຈິດໃຈຂອງຜູ້ຄົນ. ພວກເຂົາກຳລັງກໍ່ສ້າງອາຄານຂະໜາດໃຫຍ່ທີ່ມີຫ້ອງລັບຫຼາຍບ່ອນ ເຊິ່ງໃນນັ້ນການຂົ່ມເຫັງແບບເກົ່າຈະເກີດຂຶ້ນອີກ. ພວກເຂົາກຳລັງເສີມສ້າງກຳລັງຢ່າງລັບ ໆ ເພື່ອບັນລຸເປົ້າໝາຍຂອງຕົນເມື່ອເວລາທີ່ຈະໂຈມຕີມາເຖິງ. ສິ່ງດຽວທີ່ພວກເຂົາຕ້ອງການແມ່ນໂອກາດທີ່ດີເທົ່ານັ້ນ, ເຊິ່ງຕອນນີ້ພວກເຂົາກໍໄດ້ຮັບແລ້ວ. ບໍ່ດົນພວກເຮົາຈະໄດ້ເຫັນ ແລະ ຈະຮູ້ສຶກເຖິງຈຸດປະສົງຂອງຄຣິສຕະຈັກໂຣມ. ໃນຄາວນັ້ນ, ຜູ້ໃດທີ່ເຊື່ອ ແລະ ປະຕິບັດຕາມພຣະຄຳຂອງພຣະເຈົ້າຈະຖືກດູໝິ່ນ ແລະ ຈະຖືກກົດຂີ່ຂົ່ມເຫັງ. *{GC 581.2}*

ຂໍ້ກ່າວໜາແຕ່ບູຮານທີ່ເຄີຍໃຊ້ກັບຜູ້ຮັບໃຊ້ຂອງພຣະເຈົ້າກໍຈະຖືກນຳມາໃຊ້ອີກ ໂດຍອີງໃສ່ເຫດຜົນທີ່ຄ້າຍຄືກັນ: “ກະສັດອາຮາບກໍມາພົບກັບເອລີຢາ. ພໍເຫັນເອລີຢາ ເພິ່ນກໍກ່າວວ່າ, ‘ເຈົ້າຢູ່ນີ້ເອງ ເຈົ້າຜູ້ສ້າງຄວາມເດືອດຮ້ອນໜ້າຍທີ່ສຸດໃນອານາຈັກອິດສະຣາເອນ.’” (1 ກະສັດ 18:16–17).

ເບິ່ງໜ້າ 477.

Image generated with AI (Google Gemini).

36

ຄວາມຂັດແຍ້ງທີ່ໃກ້ຈະເກີດຂຶ້ນ

ຊາຕານຕໍ່ຕ້ານພຣະບັນຍັດ

ນັບຕັ້ງແຕ່ເລີ່ມຕົ້ນການຂັດແຍ້ງອັນຍິ່ງໃຫຍ່ໃນສະຫວັນ, ຈຸດປະສົງຂອງຊາຕານແມ່ນການທຳລາຍພຣະບັນຍັດຂອງພຣະເຈົ້າ. ເພື່ອໃຫ້ບັນລຸເປົ້າໝາຍນີ້, ມັນຈຶ່ງກະບົດຕໍ່ພຣະຜູ້ສ້າງ; ແລະເຖິງແມ່ນວ່າມັນຖືກຂັບໄລ່ອອກຈາກສະຫວັນ, ມັນກໍຍັງສືບຕໍ່ເຮັດສົງຄາມແບບດຽວກັນໃນໂລກ. ມັນມຸ່ງໝັ້ນທີ່ຈະຫຼອກລວງມະນຸດໃຫ້ລະເມີດພຣະບັນຍັດຂອງພຣະເຈົ້າ. ບໍ່ວ່າຈະສຳເລັດໂດຍການປະຖິ້ມພຣະບັນຍັດທັງໝົດ ຫຼື ປະຕິເສດພຽງຂໍ້ດຽວ ຜົນສຸດທ້າຍກໍຈະເໝືອນກັນ. ຜູ້ທີ່ລະເມີດ “ຂໍ້ໃດຂໍ້ໜຶ່ງ” ກໍສະແດງເຖິງການດູໝິ່ນພຣະບັນຍັດທັງໝົດ, ອິດທິພົນກັບແບບຢ່າງຂອງເຂົາຢູ່ຝ່າຍການລະເມີດ; ສະນັ້ນ, ເຂົາຈຶ່ງມີຄວາມ “ຜິດໃນຖານຝ່າຝືນກົດບັນຍັດທັງໝົດ.” (ຢາໂກໂບ 2:10). *{GC 582.1}*

ເນື່ອງຈາກຊາຕານຢາກໃຫ້ຄົນໝິ່ນປະໝາດພຣະບັນຍັດຂອງພຣະເຈົ້າ, ມັນຈຶ່ງບິດເບືອນຄຳສອນຂອງພຣະຄຳພີຈົນຄົນຈຳນວນຫຼວງຫຼາຍທີ່ອ້າງວ່າເຊື່ອໃນພຣະຄຳພີໄດ້ຫຼົງເຊື່ອຄຳສອນຜິດ. ການຕໍ່ສູ້ຄັ້ງສຸດທ້າຍລະຫວ່າງຄວາມຈິງ ແລະ ຄວາມເທັດ ແມ່ນການປິດສາກຄວາມຂັດແຍ້ງທີ່ດຳເນີນມາຢ່າງຍາວນານກ່ຽວກັບພຣະບັນຍັດຂອງພຣະເຈົ້າ. ບັດນີ້, ພວກເຮົາກຳລັງກ້າວເຂົ້າສູ່ການຕໍ່ສູ້ຄັ້ງສຸດທ້າຍນີ້, ເປັນການຕໍ່ສູ້ລະຫວ່າງຂໍ້ບັງຄັບຂອງມະນຸດ ແລະ ພຣະບັນຍັດຂອງພຣະເຢໂຮວາ, ລະຫວ່າງສາສະໜາທີ່ອີງໃສ່ພຣະຄຳພີ ແລະ ສາສະໜາທີ່ອີງໃສ່ນິຍາຍປະດິດກັບຮີດຄອງປະເພນີ. *{GC 582.2}*

ຝ່າຍຕ່າງ ໆ ທີ່ຈະຮ່ວມມືກັນຕໍ່ສູ້ຄວາມຈິງ ແລະ ຄວາມຊອບທຳໃນສົງຄາມຄັ້ງນີ້ກຳລັງເຄື່ອນໄຫວຢູ່ແລ້ວ. ຄົນສ່ວນຫຼາຍບໍ່ເຫັນຄຸນຄ່າຂອງພຣະຄຳອັນສັກສິດຂອງພຣະເຈົ້າທີ່ສືບທອດມາເຖິງພວກເຮົາຜ່ານການເສຍເລືອດເນື້ອ ແລະ ຄວາມທຸກທໍລະມານ. ເຖິງແມ່ນວ່າ ທຸກຄົນສາມາດເຂົ້າເຖິງພຣະຄຳພີໄດ້ງ່າຍ ແຕ່ມີໜ້ອຍຄົນທີ່ຍອມຮັບເອົາພຣະຄຳພີເປັນສິ່ງນຳພາຊີວິດ. ການປະຕິເສດພຣະເຈົ້າກຳລັງແຜ່ລາມໄປເຖິງລະດັບທີ່ໜ້າຢ້ານກົວ, ບໍ່ແມ່ນພຽງແຕ່ໃນທ່າມກາງຊາວໂລກເທົ່ານັ້ນ ແຕ່ໃນຄຣິສຕະຈັກດ້ວຍ. ຫຼາຍຄົນປະຕິເສດຫຼັກຄຳສອນຕ່າງ ໆ ທີ່ເປັນເສົາຫຼັກພື້ນຖານແຫ່ງຄວາມເຊື່ອຂອງຄຣິສຕຽນ. ຄົນສ່ວນໃຫຍ່ທີ່ອ້າງວ່າເປັນຄຣິສຕຽນໄດ້ປະຕິເສດຄວາມຈິງອັນສຳຄັນຫຼາຍຢ່າງ ເຊັ່ນ: ການຊົງສ້າງຕາມທີ່ຂຽນໄວ້ໃນພຣະຄຳພີ, ການທີ່ມະນຸດຕົກສູ່ຄວາມບາບ, ການໄຖ່ມະນຸດໃຫ້ລອດ ແລະ ຄວາມຄົງຢູ່ຂອງພຣະບັນຍັດຂອງພຣະເຈົ້າ, ໂດຍທີ່ບາງຄົນປະຕິເສດເສຍທັງໝົດ ແລະ ບາງຄົນປະຕິເສດສະເພາະບາງສ່ວນ. ຄົນຈຳນວນຫຼວງຫຼາຍທີ່ພາກພູມໃຈໃນສະຕິປັນຍາ ແລະ ການເຜີ່ງພາຕົນເອງຖືວ່າ ການເຊື່ອໃນພຣະຄຳພີຢ່າງໝົດໃຈນັ້ນສະແດງເຖິງຄວາມອ່ອນແອ. ພວກເຂົາຄິດວ່າການຈັບຜິດ ແລະ ການຕີຄວາມພຣະຄຳພີໃຫ້ເປັນພຽງເລື່ອງປຽບທຽບ ແລະ ນິທານສອນໃຈ ສະແດງເຖິງຄວາມສາມາດ ແລະ ການສຶກສາທີ່ເໜືອກວ່າຄົນອື່ນ. ສາສະໜາຈານຫຼາຍຄົນກຳລັງສອນສະມາຊິກ ແລະ ຄູອາຈານກຳລັງສອນ

ນັກຮຽນນັກສຶກສາຂອງຕົນວ່າ ພຣະບັນຍັດຂອງພຣະເຈົ້າໄດ້ຖືກປັບປ່ຽນ ຫຼື ຖືກຍົກເລີກໄປແລ້ວ. ສ່ວນຄົນທີ່ເຊື່ອວ່າພຣະບັນຍັດຍັງມີຜົນບັງຄັບໃຊ້ຢູ່ ແລະ ຕ້ອງປະຕິບັດຕາມທີ່ຂຽນໄວ້ນັ້ນກໍຖືກຄົນທັງຫຼາຍດູໝິ່ນເຍາะເຍີ້ຍ. {GC 582.3}

ເມື່ອຜູ້ໃດປະຕິເສດຄວາມຈິງ ຜູ້ນັ້ນກໍປະຕິເສດພຣະຜູ້ສ້າງຄວາມຈິງນັ້ນ. ການລະເມີດພຣະບັນຍັດຂອງພຣະເຈົ້າກໍເທົ່າກັບການປະຕິເສດອຳນາດຂອງພຣະອົງຜູ້ປະທານພຣະບັນຍັດ. ການຍຶດເອົາຄຳສອນຜິດ ແລະ ທິດສະດີທີ່ບໍ່ຈິງມາເປັນຮູບເຄົາລົບກໍງ່າຍພໍ ໆ ກັບການສ້າງຮູບເຄົາລົບຈາກໄມ້ ຫຼື ຫີນ. ຊາຕານບິດເບືອນພຣະລັກສະນະຂອງພຣະເຈົ້າເພື່ອໃຫ້ມະນຸດເຂົ້າໃຈພຣະອົງຜິດໄປຈາກຄວາມຈິງ. ຫຼາຍຄົນໄດ້ຍົກເອົາແນວຄິດທາງປັດຊະຍາຂຶ້ນມາເປັນຮູບເຄົາລົບແທນທີ່ຈະນັບຖືພຣະເຢໂຮວາໃນຖານະພຣະເຈົ້າສູງສຸດ. ມີໜ້ອຍຄົນທີ່ນະມັດສະການພຣະເຈົ້າອົງຊົງພຣະຊົນຢູ່ຕາມທີ່ພຣະອົງໄດ້ຮັບການເປີດເຜີຍໃນພຣະຄຳພີ, ໃນພຣະຄຣິສ ແລະ ຜ່ານສິ່ງທີ່ພຣະອົງຊົງສ້າງ. ຄົນຈຳນວນຫຼວງຫຼາຍຂາບໄຫວ້ບູຊາທຳມະຊາດ ແຕ່ພັດປະຕິເສດພຣະເຈົ້າຜູ້ຊົງສ້າງທຳມະຊາດນັ້ນ. ເຖິງແມ່ນວ່າຈະມີຮູບແບບທີ່ແຕກຕ່າງກັນ, ແຕ່ໃນປັດຈຸບັນ ການຂາບໄຫວ້ຮູບເຄົາລົບກໍຍັງມີຢູ່ໃນໝູ່ຄຣິສຕຽນ ເໝືອນກັບທີ່ເຄີຍມີທ່າມກາງຊາວອິດສະຣາເອນໃນສະໄໝຂອງຜູ້ເຜີຍພຣະທຳເອລີຢາ. ພຣະເຈົ້າຂອງຫຼາຍຄົນທີ່ອ້າງວ່າເປັນນັກປາດ, ນັກປັດຊະຍາ, ນັກກະວີ, ນັກການເມືອງ, ນັກຂ່າວ, ລວມທັງພຣະເຈົ້າຂອງຊົນຊັ້ນສູງ, ຂອງມະຫາວິທະຍາໄລຫຼາຍແຫ່ງ ແລະ ແມ່ນແຕ່ຂອງສະຖາບັນສາສະໜາສາດບາງແຫ່ງກໍບໍ່ດີໄປກວ່າພຣະບາອານ ເຊິ່ງເປັນພຣະແຫ່ງດວງອາທິດທີ່ຊາວໂຟນີເຊຍຂາບໄຫວ້ບູຊາ. {GC 583.1}

ໃນບັນດາຄວາມຜິດທີ່ວົງການຄຣິສຕຽນຍອມຮັບນັ້ນ, ບໍ່ມີຄວາມຜິດໃດທີ່ທ້າທາຍອຳນາດຂອງສະຫວັນ, ບໍ່ມີຄວາມຜິດໃດທີ່ຂັດແຍ້ງກັບເຫດຜົນໂດຍກົງ ແລະ ບໍ່ມີຄວາມຜິດໃດທີ່ນຳຜົນຮ້າຍແຮງຫຼາຍໄປກວ່າຄຳສອນສະໄໝໃໝ່ທີ່ກຳລັງແຜ່ຂະຫຍາຍຢ່າງໄວວາ ທີ່ວ່າພຣະບັນຍັດຂອງພຣະເຈົ້າບໍ່ມີຜົນບັງຄັບໃຊ້ກັບມະນຸດແລ້ວ. ທຸກປະເທດມີກົດໝາຍທີ່ພົນລະເມືອງຕ້ອງເຄົາລົບ ແລະ ປະຕິບັດຕາມ. ບໍ່ມີລັດຖະບານໃດສາມາດດຳລົງຢູ່ໄດ້ໂດຍປາສະຈາກກົດໝາຍ; ແລ້ວເປັນໄປໄດ້ບໍ່ວ່າພຣະຜູ້ສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ ບໍ່ມີກົດເກນໃນການປົກຄອງສິ່ງມີຊີວິດທີ່ພຣະອົງຊົງສ້າງ? ລອງຄິດເບິ່ງວ່າ ຖ້າອາຈານຊື່ດັງຈະປະກາດໃນສາທາລະນະວ່າ ກົດໝາຍບ້ານເມືອງບໍ່ຈຳເປັນຕ້ອງຮັກສາແລ້ວຍ້ອນວ່າມັນຈຳກັດເສລີພາບຂອງປະຊາຊົນ, ພວກເຂົາຈະໄດ້ຮັບອະນຸຍາດໃຫ້ເທດສະໜາຢູ່ດິນປານໃດ? ແຕ່ການລະເມີດກົດໝາຍຂອງປະເທດຍັງບໍ່ຮ້າຍແຮງເທົ່າການຢຽບຢ່ຳພຣະບັນຍັດຂອງພຣະເຈົ້າ ອັນເປັນຮາກຖານແຫ່ງການປົກຄອງທັງປວງ. {GC 584.1}

ສົມມຸດວ່າ ປະເທດທັງຫຼາຍໄດ້ຍົກເລີກກົດໝາຍຂອງຕົນ ແລະ ປ່ອຍໃຫ້ປະຊາຊົນເຮັດຕາມໃຈມັກ, ນັ້ນກໍຍັງດີກວ່າທີ່ຈະໃຫ້ພຣະເຈົ້າຜູ້ຊົງປົກຄອງຈັກກະວານຍົກເລີກພຣະບັນຍັດຂອງພຣະອົງ ເພາะພຣະບັນຍັດນັ້ນເປັນມາດຕະຖານໃນການກ່າວໂທດຜູ້ກະທຳຜິດ ແລະ ການຮັບຮອງຜູ້ເຊື່ອຟັງ. ພວກເຮົາຢາກຮູ້ບໍ່ວ່າ ຜົນຈะເປັນແນວໃດຖ້າມີການປະຖິ້ມພຣະບັນຍັດຂອງພຣະເຈົ້າ? ການທົດລອງນີ້ໄດ້ເກີດຂຶ້ນມາແລ້ວ. ເມື່ອການປະຕິເສດຄວາມເຊື່ອໃນພຣະເຈົ້າໄດ້ກາຍເປັນແນວທາງປົກຄອງໃນປະເທດຝຣັ່ງ, ເຫດການທີ່ເກີດຂຶ້ນນັ້ນໜ້າຢ້ານກົວທີ່ສຸດ ແລະ ພິສູດໃຫ້ຄົນທັງໂລກເຫັນວ່າ ການປະຖິ້ມຂໍ້ຈຳກັດທີ່ພຣະເຈົ້າຊົງກຳນົດໄວ້ນັ້ນ ກໍເທົ່າກັບເປັນການຍອມຮັບການປົກຄອງຂອງຜะເດັດການຜູ້ໂຫດຮ້າຍທີ່ສຸດ. ເມື່ອມາດຕะຖານແຫ່ງຄວາມຊອບທຳຖືກປะຖິ້ມແລ້ວ ກໍເປັນການເປີດທາງໃຫ້ເຈົ້າແຫ່ງຄວາມຊົ່ວສ້າງຕັ້ງອຳນາດຂອງມັນໃນໂລກ. {GC 584.2}

ເມື່ອຄົນປະຕິເສດພຣະບັນຍັດຂອງພຣະເຈົ້າ, ເຂົາກໍຈะບໍ່ເຫັນວ່າຄວາມບາບເປັນສິ່ງຊົ່ວຮ້າຍ ແລะ ຄວາມຊອບທຳກໍບໍ່ໜ້າປาຖะໜา. ຜູ້ທີ່ບໍ່ຍອມຢູ່ໃຕ້ການປົກຄອງຂອງພຣະເຈົ້າກໍຂาดຄຸນນะສົມບັດໃນ

ການປົກຄອງຕົນເອງ. ຄຳສອນທີ່ຊົ່ວຮ້າຍຂອງພວກເຂົາໄດ້ປູກຝັງຄວາມຄຶດຄ້ານໄວ້ໃນໃຈຂອງເດັກນ້ອຍ ແລະ ຊາວໜຸ່ມ, ຜູ້ທີ່ບໍ່ມັກການຄວບຄຸມໂດຍທຳມະຊາດ. ຜົນທີ່ຕາມມາແມ່ນສັງຄົມທີ່ບໍ່ມີລະບຽບ ແລະ ຂາດສິນທຳ. ຄົນຈຳນວນຫຼວງຫຼາຍຮັບເອົາການຫຼອກລວງຂອງຊາຕານຢ່າງງ່າຍດາຍ ໃນຂະນະທີ່ຫົວຂວັນຄົນທີ່ປະຕິບັດຕາມພຣະບັນຍັດຂອງພຣະເຈົ້າວ່າເປັນຄົນງົມງວາຍ. ພວກເຂົາປ່ອຍຕົວໄປຕາມກິເລດຕັນຫາ ແລະ ເຮັດບາບໃນລັກສະນະດຽວກັນທີ່ເປັນເຫດໃຫ້ພຣະເຈົ້າລົງໂທດຊົນຊາດທີ່ຂາບໄຫວ້ຮູບເຄົາລົບໃນອະດີດ. *{GC 584.3}*

ຜົນຂອງການປະຖິ້ມພຣະບັນຍັດ

ຜູ້ທີ່ສອນປະຊາຊົນໃຫ້ເບິ່ງພຣະບັນຍັດຂອງພຣະເຈົ້າວ່າເປັນສິ່ງທີ່ບໍ່ສຳຄັນກຳລັງຫວ່ານເມັດພືດແຫ່ງການບໍ່ເຊື່ອຟັງ ແລະ ຈະຕ້ອງເກັບກ່ຽວຜົນແຫ່ງການບໍ່ເຊື່ອຟັງນັ້ນ. ຖ້າຄົນປະຖິ້ມຂໍ້ຫ້າມທີ່ພຣະເຈົ້າຊົງບັນຍັດໄວ້ຢ່າງໝົດສິ້ນ, ບໍ່ດົນພວກເຂົາກໍຈະບໍ່ນັບຖືກົດໝາຍຂອງມະນຸດເຊັ່ນກັນ. ເມື່ອງຈາກພຣະເຈົ້າຊົງຫ້າມການປະພຶດທີ່ບໍ່ສັດຊື່, ຄວາມໂລບ, ການຕົວະ ແລະ ການສໍ້ໂກງ, ຄົນຈຶ່ງພ້ອມທີ່ຈະຢຽບຢ້ຳກົດບັນຍັດຂອງພຣະອົງ ເພາະເຫັນວ່າມັນເປັນສິ່ງກີດຂວາງຄວາມຈະເລີນ. ແຕ່ຜົນຂອງການປະຖິ້ມຂໍ້ບັນຍັດເຫຼົ່ານີ້ຈະບໍ່ເປັນດັ່ງທີ່ພວກເຂົາຄາດຄິດໄວ້. ຖ້າກົດບັນຍັດບໍ່ມີຜົນບັງຄັບໃຊ້ ກຳຄົງບໍ່ມີໃຜຢ້ານທີ່ຈະລ່ວງລະເມີດ ແລະ ຊັບສິນກໍຈະບໍ່ປອດໄພອີກຕໍ່ໄປ; ຄົນຈະຍາດເອົາສິ່ງຂອງຂອງເພື່ອນບ້ານດ້ວຍຄວາມຮຸນແຮງ ແລະ ຜູ້ທີ່ແຂງແຮງທີ່ສຸດກໍຈະກາຍເປັນຜູ້ຮັ່ງມີທີ່ສຸດ. ຊີວິດຈະບໍ່ມີຄ່າ, ການແຕ່ງງານຈະໝົດຄວາມສັກສິດ ແລະ ຈະບໍ່ປ້ອງກັນຄອບຄົວອີກຕໍ່ໄປ; ຜູ້ທີ່ມີອຳນາດກໍຈະຍາດເອົາເມຍຂອງເພື່ອນບ້ານໄປຕາມໃຈມັກ. ພຣະບັນຍັດຂໍ້ທີຫ້າກໍຈະຖືກປະຖິ້ມໄປພ້ອມກັບຂໍ້ທີສີ່; ລູກຈະບໍ່ລັງເລທີ່ຈະຂ້າພໍ່ແມ່ຂອງຕົນ ຖ້າຈະນຳໄປສູ່ສິ່ງທີ່ຈິດໃຈອັນຊົ່ວຮ້າຍຂອງຕົນປາຖະໜາ. ບັນດາປະເທດທີ່ຈະເລີນກໍຈະກາຍເປັນບ່ອນຢູ່ຂອງພວກໂຈນ ແລະ ຄາຕະກອນ, ແລ້ວຄວາມສະຫງົບສຸກກໍຈະໝົດໄປຈາກແຜ່ນດິນ. *{GC 585.1}*

ການທີ່ຄົນໃນທຸກມື້ນີ້ເຊື່ອວ່າບໍ່ຈຳເປັນຕ້ອງປະຕິບັດຕາມພຣະບັນຍັດຂອງພຣະເຈົ້າ ເຮັດໃຫ້ພວກເຂົາບໍ່ຢ້ານບາບ ແລະ ເປີດທາງໃຫ້ຄວາມຊົ່ວຫຼັ່ງໄຫຼເຂົ້າມາໃນໂລກ. ການລະເມີດກົດໝາຍ, ການໃຊ້ຊີວິດແບບສຳມະເລເທເມົາ ແລະ ຄວາມເສື່ອມເສຍທາງສິນທຳ ກຳລັງຖະຫຼັ່ນໃສ່ພວກເຮົາຄືກັບຄື້ນຍັກຊຶນາມິ. ຊາຕານກຳລັງເຮັດວຽກຢູ່ໃນຄອບຄົວ; ທຸງຂອງມັນປິວສະບັດຢູ່ແມ່ນແຕ່ໃນຄອບຄົວທີ່ອ້າງວ່າເປັນຄຣິສຕຽນ. ມີການອິດສາບ້ຽບໆ, ການລະແວງສົງໄສ, ການໜ້າໄຫວ້ຫຼັງຫຼອກ, ການແຕກແຍກ, ການແກ່ງແຍ່ງຊິງດີ, ການທໍລະຍົດຕໍ່ຄຳໝັ້ນສັນຍາ ແລະ ການປ່ອຍຕົວຕາມກິເລດຕັນຫາ. ຫຼັກການ ແລະ ລະບຽບຄຳສອນທາງສາສະໜາທັງໝົດທີ່ຄວນເປັນຮາກຖານ ແລະ ໂຄງຮ່າງຂອງສັງຄົມເບິ່ງຄືວ່າກຳລັງຈະພັງທະລາຍລົງ. ອາດຂະຍາກອນທີ່ຕ່ຳຊ້າທີ່ສຸດ, ເມື່ອຖືກຈັບເຂົ້າຄຸກມັກຈະໄດ້ຮັບຂອງຂວັນ ແລະ ການເອົາໃຈໃສ່ ເໝືອນກັບວ່າເປັນວິລະບຸລຸດ. ສື່ມວນຊົນເອົາເລື່ອງອຸປະນິໄສ ແລະ ຄວາມຜິດຂອງພວກເຂົາໄປເຜີຍແຜ່ຢ່າງກວ້າງຂວາງ. ໜັງສືພິມລົງລາຍລະອຽດຄວາມຊົ່ວຮ້າຍ, ເຊິ່ງກາຍເປັນແບບຢ່າງໃຫ້ຄົນອື່ນເຮັດການສໍ້ໂກງ, ການປຸ້ນຈີ້ ແລະ ການຂ້າຄົນ, ເຮັດໃຫ້ຊາຕານປິຕິຍິນດີທີ່ແຜນການອັນຊົ່ວຮ້າຍຂອງມັນສຳເລັດຜົນ. ມີການຫຼົງໄຫຼໃນຄວາມຊົ່ວ, ການຂ້າຄົນຢ່າງບໍ່ມີເຫດຜົນ, ການປ່ອຍຕົວກິນດື່ມຢ່າງໜ້າຢ້ານ ແລະ ການເຮັດຊົ່ວທຸກຮູບແບບຢ່າງໜ້າກົວ. ສິ່ງເຫຼົ່ານີ້ຄວນເຮັດໃຫ້ທຸກຄົນທີ່ຢຳເກງພຣະເຈົ້າລຸກຂຶ້ນມາຊອກຫາວິທີທີ່ຈະຢຸດຢັ້ງກະແສແຫ່ງຄວາມຊົ່ວດັ່ງກ່າວ. *{GC 585.2}*

ສານຍຸຕິທຳມີແຕ່ຄວາມສິ້ນຫວັງ. ຜູ້ປົກຄອງຖືກຊັກຈູງດ້ວຍຄວາມໂລບ ແລະ ມົວເມົາຕາມໂລກີຍະວິໄສ. ຄວາມມືນເມົາໄດ້ເຮັດໃຫ້ຈິດໃຈຂອງຫຼາຍຄົນມືດມົນຈົນຊາຕານມີອຳນາດເໜືອພວກເຂົາເກືອບທັງໝົດ. ຜູ້ພິພາກສາຖືກຊັກຈູງໃຫ້ເຮັດຜິດ, ຮັບສິນບົນ ແລະ ຖືກຫຼອກລວງ. ຜູ້ບັງຄັບໃຊ້ກົດໝາຍນັ້ນພັດເມົາເຫຼົ້າ, ມົ້ວສຸມ, ປ່ອຍຕົວຕາມກິເລດ, ອິດສາບັງບຽດ ແລະ ສໍ້ໂກງທຸກຮູບແບບ. “ຄວາມຍຸຕິທຳຖືກຂັບໄລ່ໃຫ້ໜີໄປ ແລະ ຄວາມຖືກຕ້ອງກໍເຂົ້າມາໃກ້ບໍ່ໄດ້. ຄວາມຈິງເຕະສະດຸດລົ້ມລົງທີ່ສີ່ແຍກກາງເມືອງ ແລະ ຄວາມສັດຊື່ກໍບໍ່ມີຢູ່ໃນທີ່ນັ້ນ.” (ເອຊາຢາ 59:14). *{GC 586.1}*

ຄວາມຊົ່ວຮ້າຍ ແລະ ຄວາມມືດຝ່າຍຈິດວິນຍານທີ່ແຜ່ລາມໃນສະໄໝທີ່ຄຣິສຕະຈັກໂຣມປົກຄອງ ກໍເປັນຜົນທີ່ຫຼີກລ່ຽງບໍ່ໄດ້ຈາກການທີ່ພວກເຂົາກີດກັ້ນບໍ່ໃຫ້ຄົນອ່ານພຣະຄຳພີ. ແຕ່ອັນໃດເປັນສາເຫດຂອງການປະຕິເສດພຣະເຈົ້າ, ການປະຕິເສດພຣະບັນຍັດຂອງພຣະອົງ ແລະ ຄວາມເສື່ອມຊາມທາງສິນທຳທີ່ເກີດຂຶ້ນໃນຍຸກນີ້ທີ່ແສງສະຫວ່າງແຫ່ງຂ່າວປະເສີດສ່ອງມາຢ່າງເຈີດຈ້າ ແລະ ມີເສລີພາບທາງສາສະໜາ? ບັດນີ້, ເມື່ອຊາຕານບໍ່ສາມາດຄວບຄຸມມະນຸດສະໂລກ ໂດຍການເຊື່ອງຊ່ອນພຣະຄຳພີໄວ້ອີກຕໍ່ໄປ, ມັນຈຶ່ງໃຊ້ວິທີອື່ນເພື່ອບັນລຸຈຸດປະສົງອັນດຽວກັນ. ບໍ່ວ່າຈະທຳລາຍຄວາມເຊື່ອໃນພຣະຄຳພີ ຫຼື ທຳລາຍພຣະຄຳພີເອງ ກໍເຮັດໃຫ້ຈຸດປະສົງຂອງມັນສຳເລັດເໝືອນກັນ. ຊາຕານໄດ້ແຊກຊຶມແນວຄິດທີ່ວ່າ ພຣະບັນຍັດຂອງພຣະເຈົ້າບໍ່ມີຜົນບັງຄັບໃຊ້, ເຊິ່ງສົ່ງຜົນໃຫ້ຄົນລະເມີດພຣະບັນຍັດເໝືອນກັບວ່າ ພວກເຂົາບໍ່ຮູ້ຫຍັງເລີຍກ່ຽວກັບພຣະບັນຍັດ. ໃນປັດຈຸບັນ, ມັນເຮັດວຽກຜ່ານຄຣິສຕະຈັກເພື່ອເຮັດໃຫ້ແຜນການຂອງມັນສຳເລັດຄືກັບໃນສະໄໝກ່ອນ. ອົງການສາສະໜາໃນທຸກມື້ນີ້ປະຕິເສດທີ່ຈະຮັບຟັງຄວາມຈິງທີ່ພຣະຄຳພີສອນຢ່າງຈະແຈ້ງເພາະບໍ່ເປັນທີ່ນິຍົມຂອງຄົນໃນສັງຄົມ. ຍິ່ງໄປກວ່ານັ້ນ, ພວກເຂົາກໍຍັງຕໍ່ຕ້ານຄວາມຈິງເຫຼົ່ານັ້ນ ທັງໄດ້ຕີຄວາມໝາຍ ແລະ ມີຈຸດຢືນທີ່ສ້າງຄວາມສົງໄສໃນໃຈຂອງຄົນທົ່ວໄປ. ພວກເຂົາຍຶດຕິດກັບຄວາມເຊື່ອຜິດຂອງຄຣິສຕະຈັກໂຣມທີ່ວ່າມະນຸດມີວິນຍານອະມະຕະໂດຍທຳມະຊາດ ແລະ ຍັງມີສະຕິຫຼັງຈາກຕາຍ. ພວກເຂົາຈຶ່ງບໍ່ມີແນວປ້ອງກັນຈາກການຖືກຫຼອກລວງໃນເລື່ອງການຕິດຕໍ່ກັບວິນຍານ. ຄຳສອນເລື່ອງການທໍລະມານຄົນບາບຕະຫຼອດນິຣັນ ເຮັດໃຫ້ຫຼາຍຄົນບໍ່ເຊື່ອໃນພຣະຄຳພີ. ເມື່ອມີການສອນຄົນທັງຫຼາຍເຖິງຄວາມສຳຄັນຂອງການຮັກສາພຣະບັນຍັດຂໍ້ທີສີ່ ພວກເຂົາກໍພົບວ່າຕ້ອງຮັກສາມື້ທີເຈັດເປັນວັນສະບາໂຕ. ແຕ່ພວກອາຈານທີ່ມີຊື່ສຽງເຫັນວ່າມີທາງດຽວທີ່ຈະຫຼີກລ່ຽງການເຮັດໜ້າທີ່ທີ່ພວກເຂົາບໍ່ຍອມປະຕິບັດ ນັ້ນຄືການປະກາດວ່າ ພຣະບັນຍັດຂອງພຣະເຈົ້າບໍ່ມີຜົນບັງຄັບໃຊ້ແລ້ວ. ດັ່ງນັ້ນ, ພວກເຂົາຈຶ່ງປະຖິ້ມທັງພຣະບັນຍັດ ແລະ ວັນສະບາໂຕໄປພ້ອມກັນ. ເມື່ອວຽກງານການປະຕິຮູບວັນສະບາໂຕຂະຫຍາຍອອກໄປ, ການປະຕິເສດພຣະບັນຍັດເພື່ອຫຼີກລ່ຽງຂໍ້ທີສີ່ຈະແຜ່ກວ້າງອອກໄປເກືອບທົ່ວທຸກບ່ອນ. ຜູ້ນຳສາສະໜາໄດ້ເປີດປະຕູໃຫ້ຄົນປະຕິເສດພຣະເຈົ້າ, ໃຫ້ຕິດຕໍ່ກັບວິນຍານ ແລະ ໝິ່ນປະໝາດພຣະບັນຍັດອັນສັກສິດຂອງພຣະອົງ. ຄວາມຊົ່ວຮ້າຍທີ່ເກີດຂຶ້ນໃນວົງການຄຣິສຕຽນຈຶ່ງເປັນຄວາມຮັບຜິດຊອບອັນໜ້າຢ້ານກົວຂອງພວກເຂົາ. *{GC 586.2}*

ຄຳສອນຜິດສອງຢ່າງໃນຍຸກສຸດທ້າຍ

ພວກອາຈານກຸ່ມນີ້ເອງໄດ້ອ້າງວ່າ ການເສື່ອມເສຍທາງສິນລະທຳທີ່ກຳລັງແຜ່ລາມຢ່າງກວ້າງຂວາງນັ້ນເກີດຈາກການລ່ວງລະເມີດ “ວັນສະບາໂຕຂອງຄຣິສຕຽນ” ແລະ ຖ້າມີການບັງຄັບໃຫ້ຖືຮັກສາວັນອາທິດຈະຊ່ວຍຟື້ນຟູສິນລະທຳຂອງສັງຄົມໃຫ້ດີຂຶ້ນ. ມີການຮຽກຮ້ອງໃນເລື່ອງນີ້ຢູ່ໃນອາເມຣິກາເປັນພິເສດ ເຊິ່ງເປັນບ່ອນທີ່ມີການປະກາດຫຼັກຄຳສອນກ່ຽວກັບວັນສະບາໂຕທີ່ແທ້ຈິງຢ່າງກວ້າງຂວາງ

ທີ່ສຸດ. ໃນອາເມຣິກາ, ຂະບວນການຕໍ່ຕ້ານເຫຼົ້າສຸຣາຢາເມົາ ເຊິ່ງເປັນໜຶ່ງໃນວຽກງານປະຕິຮູບສິນທຳທີ່ສຳຄັນ ແລະ ໂດດເດັ່ນທີ່ສຸດ ມັກຈະເຊື່ອມໂຍງກັບການສົ່ງເສີມວັນອາທິດ. ຜູ້ສະໜັບສະໜູນຂະບວນການສົ່ງເສີມວັນອາທິດອ້າງວ່າ ພວກເຂົາກຳລັງເຮັດວຽກເພື່ອຜົນປະໂຫຍດອັນສູງສຸດຂອງສັງຄົມ; ສ່ວນຄົນທັງຫຼາຍທີ່ບໍ່ຍອມເຂົ້າຮ່ວມກັບພວກເຂົາກໍຖືກປະນາມວ່າ ເປັນສັດຕູຂອງວຽກງານຕໍ່ຕ້ານເຫຼົ້າເບຍ ແລະ ການປະຕິຮູບສັງຄົມ. ເຖິງແມ່ນວ່າ ຂະບວນການທີ່ສົ່ງເສີມຄວາມຜິດນັ້ນເຊື່ອມໂຍງກັບວຽກງານທີ່ດີກໍຕາມ, ແຕ່ນັ້ນບໍ່ໄດ້ເຮັດໃຫ້ການກະທຳຜິດກາຍເປັນສິ່ງທີ່ຖືກຕ້ອງ. ອາດມີຄົນເອົາຢາພິດມາປະປົນກັບອາຫານທີ່ມີປະໂຫຍດ ແຕ່ມັນກໍຍັງເປັນຢາພິດຢູ່ດີ ແລະ ຍິ່ງມີຄວາມອັນຕະລາຍຫຼາຍຂຶ້ນ ເພາະຄົນອາດກິນໂດຍບໍ່ທັນລະວັງ. ນີ້ເປັນໜຶ່ງໃນວິທີການຂອງຊາຕານ; ມັນເອົາຄວາມຈິງມາປະສົມກັບຄວາມບໍ່ຈິງໃຫ້ພຽງພໍທີ່ຈະເຮັດໃຫ້ຄົນຫຼົງເຊື່ອ. ຜູ້ນຳຂະບວນການສົ່ງເສີມວັນອາທິດອາດສະໜັບສະໜູນການປະຕິຮູບທີ່ປະຊາຊົນຕ້ອງການ ແລະ ຫຼັກການຕ່າງ ໆ ທີ່ສອດຄ່ອງກັບພຣະຄຳພີ, ແຕ່ເມື່ອການປະຕິຮູບເຫຼົ່ານັ້ນມີການບັງຄັບໃຫ້ເຮັດສິ່ງທີ່ຂັດກັບພຣະບັນຍັດຂອງພຣະເຈົ້າ, ຜູ້ຮັບໃຊ້ຂອງພຣະອົງກໍບໍ່ສາມາດເຂົ້າຮ່ວມກັບພວກເຂົາໄດ້. ບໍ່ມີເຫດຜົນໃດທີ່ຈະເຮັດໃຫ້ການປະລະພຣະບັນຍັດຂອງພຣະເຈົ້າເພື່ອເຮັດຕາມຄຳສັ່ງຂອງມະນຸດກາຍເປັນສິ່ງທີ່ຖືກຕ້ອງ. *{GC 587.1}*

ຊາຕານຈະໃຊ້ຄຳສອນຜິດສອງຢ່າງເພື່ອຫຼອກລວງມະນຸດ ຄື: ຄວາມເຊື່ອວ່າວິນຍານບໍ່ຕາຍ ແລະ ການຖືວັນອາທິດເປັນວັນສັກສິດ. ຄວາມເຊື່ອເລື່ອງວິນຍານບໍ່ຕາຍເປັນພື້ນຖານຂອງການຕິດຕໍ່ກັບວິນຍານ; ສ່ວນການຖືວັນອາທິດກໍສ້າງສາຍສຳພັນກັບຄຣິສຕະຈັກໂຣມ. ພວກໂປຣແຕັສຕັງໃນອາເມຣິກາຈະເປັນຜູ້ນຳໜ້າໃນການຮັບເອົາຄຳສອນເລື່ອງການຕິດຕໍ່ກັບວິນຍານ ແລະ ຈະເປັນແກນນຳໃນການຈັບມືກັບລະບອບສັນຕະປາປາ. ແລ້ວພາຍໃຕ້ອິດທິພົນຂອງການຮ່ວມມືກັນລະຫວ່າງສາມຝ່າຍນີ້, ອາເມຣິກາຈະເຮັດຕາມແບບຢ່າງຂອງຄຣິສຕະຈັກໂຣມໃນການຢຽບຢ້ຳສິດເສລີພາບທາງຈິດສຳນຶກ. *{GC 588.1}*

ໃນຍຸກນີ້, ລັດທິຕິດຕໍ່ກັບວິນຍານເລີ່ມປັບຕົວເຂົ້າກັບກຸ່ມຄຣິສຕຽນທີ່ເຊື່ອແຕ່ປາກ, ເຮັດໃຫ້ມັນມີອຳນາດຫຼອກລວງ ແລະ ສາມາດດັກຈັບຜູ້ຄົນໄດ້ຫຼາຍຂຶ້ນ. ຊາຕານເອງກໍປັບຕົວໃຫ້ເຂົ້າກັບຍຸກສະໄໝ ແລະ ຈະປາກົດຕົວເປັນທູດແຫ່ງຄວາມສະຫວ່າງ. ລັດທິການຕິດຕໍ່ກັບວິນຍານຈະເຮັດການອັດສະຈັນຫຼາຍຢ່າງ ທັງປິ່ນປົວຄົນເຈັບ ແລະ ສະແດງໝາຍສຳຄັນທີ່ບໍ່ມີໃຜປະຕິເສດໄດ້. ເນື່ອງຈາກວ່າພວກວິນຍານເຫຼົ່ານີ້ຈະອ້າງວ່າຕົນເຊື່ອໃນພຣະຄຳພີ ແລະ ໃຫ້ຄວາມເຄົາລົບຕໍ່ສະຖາບັນຂອງຄຣິສຕະຈັກ, ຄົນທັງຫຼາຍຈະຖືວ່າ ການກະທຳຂອງພວກມັນເປັນການສະແດງເຖິງຣິດອຳນາດຂອງພຣະເຈົ້າ. *{GC 588.2}*

ໃນປັດຈຸບັນນີ້, ເສັ້ນແບ່ງລະຫວ່າງຜູ້ທີ່ອ້າງວ່າເປັນຄຣິສຕຽນກັບຄົນທີ່ບໍ່ເຊື່ອພຣະເຈົ້າເກືອບຈະສັງເກດບໍ່ເຫັນ. ສະມາຊິກຄຣິສຕະຈັກມັກໃນສິ່ງທີ່ຊາວໂລກມັກ ແລະ ພ້ອມທີ່ຈະເຂົ້າຮ່ວມກັບພວກເຂົາ; ສະນັ້ນ, ຊາຕານຈຶ່ງມຸ່ງໝັ້ນທີ່ຈະເຕົ້າໂຮມພວກເຂົາໃຫ້ເປັນກຸ່ມດຽວກັນເພື່ອເສີມກຳລັງຂອງມັນ ໂດຍການດຶງທຸກຄົນເຂົ້າສູ່ລັດທິການຕິດຕໍ່ກັບວິນຍານ. ກຸ່ມກາໂຕລິກທີ່ອວດອ້າງວ່າ ການອັດສະຈັນເປັນເຄື່ອງໝາຍຢືນຢັນເຖິງຄຣິສຕະຈັກທີ່ແທ້ຈິງຈະຖືກຫຼອກລວງຢ່າງງ່າຍດາຍດ້ວຍການອັດສະຈັນເຫຼົ່ານີ້. ສ່ວນພວກໂປຣແຕັສຕັງທີ່ປະຖິ້ມໂລ້ແຫ່ງຄວາມຈິງໄປແລ້ວກໍຈະຖືກຫຼອກລວງເຊັ່ນກັນ. ພວກກາໂຕລິກ, ໂປຣແຕັສຕັງ ແລະ ຊາວໂລກຈະພາກັນຍອມຮັບຮູບແບບການນັບຖືພຣະເຈົ້າທີ່ປາສະຈາກຣິດອຳນາດ. ພວກເຂົາຈະເຫັນວ່າ ການຮ່ວມມືກັນນີ້ແມ່ນຂະບວນການອັນຍິ່ງໃຫຍ່ ເພື່ອນຳຊາວໂລກໃຫ້ກັບໃຈຮັບເຊື່ອ ແລະ ເພື່ອກ້າວເຂົ້າສູ່ເວລາ 1,000 ປີ ທີ່ລໍຄອຍກັນມາດົນນານ. *{GC 588.3}*

ຊາຕານໃຊ້ການສື່ສານກັບວິນຍານເພື່ອສະແດງຕົນເປັນຜູ້ມີບຸນຄຸນແກ່ມະນຸດສະໂລກ; ມັນປັ່ນປົ່ວພະຍາດໂຣຄາ ແລະ ນຳສະເໜີລະບົບຄວາມເຊື່ອແບບໃໝ່ ໂດຍອ້າງວ່າເປັນຄວາມເຊື່ອຖືທີ່ສູງສົ່ງກວ່າເດີມ. ແຕ່ໃນເວລາດຽວກັນ, ມັນກໍເຮັດວຽກໃນຖານະຜູ້ທຳລາຍ. ການລໍ້ລວງຂອງມັນໄດ້ນຳຄົນຈຳນວນຫຼາຍໄປສູ່ຄວາມຫາຍຍະນະ. ເມື່ອຂາດການຄວບຄຸມຕົນເອງໃນເລື່ອງການກິນການດື່ມກໍເຮັດໃຫ້ຜູ້ຄົນຂາດສະຕິປັນຍາ; ສິ່ງທີ່ຕາມມາກໍຄື ການປ່ອຍຕົວຕາມກິເລດຕັນຫາ, ການຜິດຖຽງກັນ ແລະ ການນອງເລືອດ. ຊາຕານຊົມຊື່ນຍິນດີກັບສົງຄາມ ເພາະມັນປຸກອາລົມອັນຊົ່ວຮ້າຍທີ່ສຸດຂອງຄົນ ແລ້ວນຳພາຜູ້ທີ່ຈົມຢູ່ໃນຄວາມຊົ່ວຮ້າຍ ແລະ ການຂ້າຟັນນັ້ນໄປສູ່ຄວາມພິນາດຊົ່ວນິຣັນດອນ. ຈຸດປະສົງຂອງມັນ ແມ່ນການຍຸຍົງໃຫ້ປະເທດທັງຫຼາຍເຮັດສົງຄາມຕໍ່ສູ້ກັນ, ເພາະດ້ວຍວິທີນີ້ ມັນສາມາດຫັນເຫຈິດໃຈຂອງຜູ້ຄົນອອກຈາກການກຽມພ້ອມທີ່ຈະຢືນໝັ້ນໃນວັນສຳຄັນຂອງອົງພຣະຜູ້ເປັນເຈົ້າ. *{GC 589.1}*

ຊາຕານ ອາໄສ ທຳມະຊາດ ເພື່ອ ທຳລາຍ ຄົນ ທີ່ ບໍ່ ໄດ້ ກຽມ ພ້ອມ. ມັນ ໄດ້ ຄົ້ນ ຄວ້າ ຄວາມ ລັບ ຂອງ ທຳມະຊາດ ແລະ ໃຊ້ອຳນາດທັງໝົດຂອງມັນເພື່ອຄວບຄຸມທຳມະຊາດເທົ່າທີ່ພຣະເຈົ້າຊົງອະນຸຍາດ. ເມື່ອພຣະເຈົ້າຍອມໃຫ້ມັນທົດລອງໂຢບ, ບັນດາຝູງສັດລ້ຽງ, ຄົນໃຊ້, ເຮືອນຊານ ແລະ ລູກທັງຫຼາຍຂອງເພິ່ນກໍຖືກທຳລາຍໄປທັນທີໂດຍມີເຫດຮ້າຍເກີດຂຶ້ນຢ່າງຕໍ່ເນື່ອງ. ແມ່ນພຣະເຈົ້າເອງທີ່ປົກປ້ອງຜູ້ທີ່ພຣະອົງຊົງສ້າງ ແລະ ກັ້ນບໍ່ໃຫ້ຜູ້ທຳລາຍເຂົ້າມາໃກ້. ແຕ່ວ່າການຄຣິສຕຽນໄດ້ໝິ່ນປະໝາດພຣະບັນຍັດຂອງພຣະເຢໂຮວາ; ສະນັ້ນ, ພຣະອົງຈະຊົງເຮັດຕາມທີ່ພຣະອົງຊົງປະກາດໄວ້ ໂດຍຈະຖອນພຣະພອນອອກໄປຈາກແຜ່ນດິນໂລກ ແລະ ຍົກການປົກປ້ອງຄຸ້ມຄອງອອກໄປຈາກຜູ້ທີ່ຕໍ່ຕ້ານພຣະບັນຍັດຂອງພຣະອົງ ພ້ອມທັງສອນ ແລະ ບັງຄັບຄົນອື່ນໃຫ້ເຮັດຕາມ. ທຸກຄົນທີ່ບໍ່ໄດ້ຮັບການຄຸ້ມຄອງຈາກພຣະເຈົ້າເປັນພິເສດກໍຢູ່ໃຕ້ການຄວບຄຸມຂອງຊາຕານ. ມັນຈະຊ່ວຍບາງຄົນໃຫ້ຈະເລີນຮຸ່ງເຮືອງ ເພື່ອສົ່ງເສີມແຜນການຂອງມັນ; ໃນຂະນະດຽວກັນ, ມັນກໍສ້າງຄວາມເດືອດຮ້ອນໃຫ້ຄົນອື່ນ ແລະ ເຮັດໃຫ້ພວກເຂົາເຊື່ອວ່າ ແມ່ນພຣະເຈົ້າເປັນຜູ້ເຮັດໃຫ້ຊີວິດຂອງພວກເຂົາລຳບາກ. *{GC 589.2}*

ຊາຕານຈະສະແດງຕົນຕໍ່ມວນມະນຸດວ່າ ມັນເປັນນາຍແພດຜູ້ຍິ່ງໃຫຍ່ທີ່ສາມາດປິ່ນປົວໂຣຄາພະຍາດທຸກຊະນິດໄດ້ ແຕ່ໃນຄວາມເປັນຈິງມັນຈະນຳພະຍາດໂຣຄາ ແລະ ຄວາມຫາຍຍະນະມາສູ່ມະນຸດ ຈົນເຮັດໃຫ້ເມືອງໃຫຍ່ຫຼາຍແຫ່ງກາຍເປັນບ່ອນທີ່ຮົກຮ້າງເປົ່າປ່ຽວ. ແມ່ນແຕ່ດຽວນີ້, ມັນກຳກຳລັງລົງມືເຮັດວຽກຢູ່ແລ້ວ. ມັນສະແດງອຳນາດຂອງມັນໃນທຸກບ່ອນ ແລະ ໃນຮູບແບບຕ່າງໆນັບພັນວິທີ ເຊັ່ນ: ໃນອຸບັດຕິເຫດ ແລະ ໄພພິບັດທາງບົກ ແລະ ທາງນ້ຳ, ໃນໄຟໄໝ້ຄັ້ງໃຫຍ່, ໃນພະຍຸໝຸນທຳນາໂດອັນຮຸນແຮງ ແລະ ໝາກເຫັບຂະໜາດໃຫຍ່, ໃນພະຍຸໄຕ້ຝຸ່ນ, ນ້ຳຖ້ວມ, ຄື້ນຍັກ ແລະ ແຜ່ນດິນໄຫວ. ມັນທຳລາຍພືດຜົນທີ່ກຳລັງຈະສຸກ, ເຮັດໃຫ້ເກີດຄວາມອຶດຢາກ ແລະ ຄວາມທຸກຍາກລຳບາກ. ມັນເຮັດໃຫ້ອາກາດເປັນພິດ ເຊິ່ງນຳຄວາມຕາຍມາສູ່ຄົນຈຳນວນຫຼາຍ. ໄພພິບັດເຫຼົ່ານີ້ຈະຖີ່ຂຶ້ນ ແລະ ຮ້າຍແຮງຂຶ້ນເລື້ອຍໆ. ຄວາມຫາຍຍະນະຈະເກີດຂຶ້ນກັບມະນຸດ ແລະ ສັດ. “ແຜ່ນດິນໂລກຈະແຫ້ງແລ້ງ ແລະ ທຸກສິ່ງຈະຫ່ຽວແຫ້ງໄປ, ທົ່ວທັງໂລກຈະອ່ອນລົງ.” “ປະຊາກອນໄດ້ເຮັດໃຫ້ໂລກນີ້ເປັນມົນທິນ ໂດຍລະເມີດກົດບັນຍັດຂອງພຣະເຈົ້າ ແລະ ຝ່າຝືນພັນທະສັນຍາທີ່ພຣະອົງໄດ້ເຮັດໄວ້ກັບພວກເຂົາຕະຫຼອດໄປ.” (ເອຊາຢາ 24:4, 5). *{GC 589.3}*

ແລ້ວຊາຕານຈະຊັກຈູງມະນຸດໃຫ້ເຊື່ອວ່າ ຜູ້ທີ່ຮັບໃຊ້ພຣະເຈົ້ານັ້ນແຫຼະເປັນຕົ້ນເຫດຂອງເຫດຮ້າຍເຫຼົ່ານີ້. ພວກທີ່ຍົວະໃຫ້ສະຫວັນບໍ່ພໍໃຈຈະກ່າວໂທດໃສ່ຜູ້ທີ່ປະຕິບັດຕາມພຣະບັນຍັດຂອງພຣະເຈົ້າ

ເພາະການເຊື່ອຟັງຂອງຄົນເຫຼົ່ານີ້ເປັນການຕຳໜິຢູ່ຕະຫຼອດເວລາຕໍ່ຜູ້ທີ່ລະເມີດພຣະບັນຍັດ. ພວກເຂົາຈະປະກາດວ່າມະນຸດກຳລັງເຮັດໃຫ້ພຣະເຈົ້າບໍ່ພໍພຣະໄທດ້ວຍການລະເມີດວັນອາທິດ ແລະ ເພາະຄວາມບາບນີ້ຫາຍະນະຈຶ່ງເກີດຂຶ້ນ ເຊິ່ງຈະບໍ່ມີວັນສິ້ນສຸດຈົນກວ່າຈະມີການບັງຄັບໃຫ້ຖືຮັກສາວັນອາທິດຢ່າງເຄັ່ງຄັດ. ນອກຈາກນັ້ນ, ຜູ້ທີ່ສອນໃຫ້ຮັກສາພຣະບັນຍັດຂໍ້ທີສີ່ ແລະ ເຮັດໃຫ້ການນັບຖືວັນອາທິດເສື່ອມລົງນັ້ນຈະຖືກກ່າວຫາວ່າ ເປັນຜູ້ສ້າງຄວາມອຸ້ນວາຍໃຫ້ແກ່ປະຊາຊົນ ແລະ ເປັນອຸປະສັກຂັດຂວາງບໍ່ໃຫ້ພວກເຂົາກັບຄືນສູ່ການເປັນທີ່ພໍພຣະໄທຂອງພຣະເຈົ້າ ແລະ ຄວາມຈະເລີນຮຸ່ງເຮືອງທາງເສດຖະກິດ. ດ້ວຍເຫດນີ້, ຂໍ້ກ່າວຫາແຕ່ບູຮານທີ່ເຄີຍໃຊ້ກັບຜູ້ຮັບໃຊ້ຂອງພຣະເຈົ້າກໍຈະຖືກນຳມາໃຊ້ອີກ ໂດຍອີງໃສ່ເຫດຜົນທີ່ຄ້າຍຄືກັນ: “ກະສັດອາຮາບກຳມາພົບກັບເອລີຢາ. ພໍເຫັນເອລີຢາ ເພິ່ນກໍກ່າວວ່າ, ‘ເຈົ້າຢູ່ນີ້ເອງ ເຈົ້າຜູ້ສ້າງຄວາມເດືອດຮ້ອນຫຼາຍທີ່ສຸດໃນອານາຈັກອິດສະຣາເອນ.’ ເອລີຢາຕອບວ່າ, ‘ຂ້ານ້ອຍບໍ່ແມ່ນຜູ້ສ້າງຄວາມເດືອດຮ້ອນແກ່ອິດສະຣາເອນ ແຕ່ແມ່ນທ່ານ ແລະ ພໍ່ຂອງທ່ານເອງຕ່າງຫາກ ເພາະທ່ານບໍ່ໄດ້ເຊື່ອຟັງຄຳສັ່ງຂອງພຣະເຈົ້າຢາເວ ແລະ ໄດ້ຂາບໄຫວ້ຮູບເຄົາລົບຂອງພຣະບາອານ.’” (1 ກະສັດ 18:16–18). ເມື່ອປະຊາຊົນຖືກປຸກລະດົມດ້ວຍຂໍ້ກ່າວຫາອັນບໍ່ເປັນຄວາມຈິງເຫຼົ່ານີ້ ພວກເຂົາກໍຈະໂກດແຄ້ນ ແລະ ຈະປະຕິບັດຕໍ່ເຫຼົ່າຜູ້ສົ່ງຂ່າວຂອງພຣະເຈົ້າຄ້າຍຄືກັບທີ່ຊາວອິດສະຣາເອນຜູ້ປະຖິ້ມຄວາມເຊື່ອໄດ້ປະຕິບັດຕໍ່ເອລີຢາ. *{GC 590.1}*

ວິນຍານຊົ່ວຈະອາໄສຄວາມເຊື່ອຂອງຄົນທີ່ຫຼົງໄຫຼຕາມລັດທິການຕິດຕໍ່ກັບວິນຍານ ແລະ ຈະໃຊ້ອຳນາດໃນການເຮັດອັດສະຈັນເພື່ອຕໍ່ຕ້ານຜູ້ທີ່ເລືອກເຊື່ອຟັງພຣະເຈົ້າແທນມະນຸດ. ວິນຍານເຫຼົ່ານີ້ຈະອ້າງວ່າພຣະເຈົ້າສົ່ງພວກມັນມາເພື່ອເຕືອນຜູ້ທີ່ປະຕິເສດວັນອາທິດໃຫ້ເຫັນຄວາມຜິດຂອງຕົນ; ແລະ ຈະຢືນຢັນວ່າ ທຸກຄົນຄວນປະຕິບັດຕາມກົດໝາຍບ້ານເມືອງເໝືອນດັ່ງປະຕິບັດຕາມພຣະບັນຍັດຂອງພຣະເຈົ້າ. ພວກມັນຈະສະແດງຄວາມທຸກໃຈກ່ຽວກັບຄວາມຊົ່ວຮ້າຍອັນໃຫຍ່ຫຼວງໃນໂລກ ແລະ ຈະສະໜັບສະໜຸນຖ້ອຍຄຳຂອງຜູ້ສອນສາສະໜາທີ່ວ່າ ສະພາບອັນຕົກຕ່ຳທາງສິນທຳເກີດຂຶ້ນຍ້ອນການລ່ວງລະເມີດວັນອາທິດ. ຜູ້ທີ່ປະຕິເສດຄຳກ່າວຂອງວິນຍານຊົ່ວເຫຼົ່ານັ້ນຈະຖືກສັງຄົມຄຽດແຄ້ນຢ່າງຮຸນແຮງ. *{GC 590.2}*

ໃນການຕໍ່ສູ້ຄັ້ງສຸດທ້າຍກັບໄພ່ພົນຂອງພຣະເຈົ້າ, ຊາຕານໃຊ້ກົນອຸບາຍເກົ່າທີ່ມັນເຄີຍໃຊ້ຕັ້ງແຕ່ການເລີ່ມຕົ້ນແຫ່ງຄວາມຂັດແຍ້ງໃນສະຫວັນ. ໃນຄາວນັ້ນ, ມັນອ້າງວ່າ ຕົນກຳລັງສົ່ງເສີມການປົກຄອງຂອງພຣະເຈົ້າ, ແຕ່ພັດແອບທຳລາຍຢູ່ຢ່າງລັບໆ; ແລະໃນຂະນະດຽວກັນ, ກໍກ່າວຫາພວກທູດສະຫວັນທີ່ສັດຊື່ວ່າເປັນຜູ້ທຳລາຍການປົກຄອງດັ່ງກ່າວ. ນະໂຍບາຍຫຼອກລວງແບບດຽວກັນນີ້ໄດ້ປາກົດໃຫ້ເຫັນໃນປະຫວັດສາດຂອງຄຣິສຕະຈັກໂຣມ. ຄຣິສຕະຈັກນີ້ອ້າງວ່າເປັນຜູ້ປະຕິບັດໜ້າທີ່ແທນສະຫວັນ, ແຕ່ກັບພະຍາຍາມຍົກຕົນຂຶ້ນເໜືອພຣະເຈົ້າ ແລະ ປ່ຽນແປງພຣະບັນຍັດຂອງພຣະອົງ. ໃນສະໄໝທີ່ຄຣິສຕະຈັກໂຣມມີອຳນາດ, ຜູ້ທີ່ຍອມຕາຍເພື່ອຮັກສາຄວາມສັດຊື່ຕໍ່ຂ່າວປະເສີດຖືກປະນາມວ່າເປັນຄົນຊົ່ວຮ້າຍ ແລະ ຖືກກ່າວຫາວ່າຮ່ວມມືກັບຊາຕານ. ມີການນຳເອົາທຸກວິທີທາງມາໃຊ້ເພື່ອທຳລາຍຊື່ສຽງຂອງພວກເຂົາ, ເພື່ອເຮັດໃຫ້ພວກເຂົາປາກົດຕໍ່ສາຍຕາຂອງປະຊາຊົນ ແລະ ແມ່ນແຕ່ຕໍ່ສາຍຕາຂອງຕົນເອງວ່າເປັນອາດຊະຍາກອນທີ່ຊົ່ວຮ້າຍທີ່ສຸດ. ປັດຈຸບັນນີ້, ກໍຈະເປັນຢ່າງນັ້ນເໝືອນກັນ. ຊາຕານຈະພະຍາຍາມທຳລາຍຜູ້ທີ່ຖືຮັກສາພຣະບັນຍັດຂອງພຣະເຈົ້າ ໂດຍໃຫ້ພວກເຂົາຖືກກ່າວຫາວ່າເປັນຜູ້ລະເມີດກົດໝາຍ, ເປັນຜູ້ໝິ່ນປະໝາດພຣະເຈົ້າ ແລະ ເປັນຜູ້ນຳໄພພິບັດມາສູ່ໂລກ. *{GC 591.1}*

ເສລີພາບທາງຈິດສຳນຶກ

ພຣະເຈົ້າບໍ່ເຄີຍບັງຄັບຈິດໃຈ ຫຼື ມະໂນສຳນຶກຂອງຜູ້ໃດເລີຍ. ແຕ່ກົງກັນຂ້າມ, ວິທີການທີ່ຊາຕານໃຊ້ເປັນປະຈຳເພື່ອຄວບຄຸມຜູ້ທີ່ມັນບໍ່ສາມາດຫຼອກລວງດ້ວຍວິທີອື່ນ ຄືການໃຊ້ຄວາມໂຫດຮ້າຍບັງຄັບ. ມັນພະຍາຍາມເຮັດໃຫ້ຄົນຢ້ານກົວ ແລະ ໃຊ້ການບີບບັງຄັບເພື່ອຄວບຄຸມຄວາມສຳນຶກຜິດຊອບຊົ່ວດີຂອງຄົນ ແລະ ເຮັດໃຫ້ພວກເຂົາຂາບໄຫວ້ມັນ. ເພື່ອບັນລຸເປົ້າໝາຍນີ້, ມັນເຮັດວຽກຜ່ານຜູ້ນຳສາສະໜາ ແລະ ອຳນາດການປົກຄອງ, ຊັກຈູງໃຫ້ພວກເຂົາບັງຄັບໃຊ້ກົດໝາຍທີ່ຂັດຕໍ່ພຣະບັນຍັດຂອງພຣະເຈົ້າ. {GC 591.2}

ຜູ້ທີ່ໃຫ້ກຽດແກ່ວັນສະບາໂຕຕາມພຣະຄຳພີຈະຖືກກ່າວຫາວ່າ ເປັນສັດຕູຜູ້ທຳລາຍກົດໝາຍ ແລະ ຄວາມສະຫງົບສຸກຂອງບ້ານເມືອງ, ເປັນຜູ້ທຳລາຍຫຼັກສິນທຳຂອງສັງຄົມ, ເປັນຜູ້ກໍ່ຄວາມວຸ້ນວາຍ ແລະ ຄວາມເສື່ອມເສຍ, ອີກທັງເປັນຜູ້ດຶງໄພພິບັດຂອງພຣະເຈົ້າລົງມາສູ່ແຜ່ນດິນໂລກ. ການທີ່ພວກເຂົາຢຶດໝັ້ນໃນຫຼັກຄວາມເຊື່ອຈະຖືກຕີຄວາມໝາຍວ່າເປັນຄວາມດື້ດ້ານ, ຄວາມແຂງກະດ້າງ ແລະ ການໝິ່ນປະໝາດຕໍ່ອຳນາດການປົກຄອງ. ພວກເຂົາຈະຖືກກ່າວຫາວ່າເປັນພວກທີ່ຂັດຂືນຕໍ່ລັດຖະບານ. ສ່ວນພວກສາສະໜາຈານທີ່ປະຕິເສດການຖືຮັກສາພຣະບັນຍັດຂອງພຣະເຈົ້າ ຈະຢືນຢູ່ເທິງທຳມາດປະກາດວ່າ ມະນຸດມີໜ້າທີ່ເຊື່ອຟັງອຳນາດການປົກຄອງ ເພາະແມ່ນພຣະເຈົ້າເອງທີ່ຊົງແຕ່ງຕັ້ງໄວ້. ໃນສະພາຝ່າຍນິຕິບັນຍັດ ແລະ ສານຍຸຕິທຳ, ຜູ້ທີ່ຮັກສາພຣະບັນຍັດຈະຖືກໃສ່ຮ້າຍປ້າຍສີ ແລະ ຈະຖືກຕັດສິນລົງໂທດ. ຖ້ອຍຄຳຂອງພວກເຂົາຈະຖືກບິດເບືອນ ແລະ ເຈດຕະນາຂອງພວກເຂົາຈະຖືກຕີຄວາມໄປໃນທາງທີ່ເລວຮ້າຍທີ່ສຸດ. {GC 592.1}

ເມື່ອບັນດາຄຣິສຕະຈັກຝ່າຍໂປຣແຕັສຕັງປະຕິເສດຄວາມຈິງອັນຈະແຈ້ງໃນພຣະຄຳພີທີ່ສະໜັບສະໜູນການຮັກສາພຣະບັນຍັດຂອງພຣະເຈົ້າ, ພວກເຂົາຈະພະຍາຍາມລະງັບສຽງຂອງຜູ້ທີ່ພວກເຂົາບໍ່ສາມາດໂຕ້ຖຽງດ້ວຍພຣະຄຳພີໄດ້. ເຖິງແມ່ນວ່າພວກເຂົາປິດຫູປິດຕາຕໍ່ຄວາມຈິງ, ພວກເຂົາກຳລັງດຳເນີນການທີ່ຈະນຳໄປສູ່ການຂົ່ມເຫັງຜູ້ທີ່ຟັງສຽງຈິດສຳນຶກຜິດຊອບຂອງຕົນ ໂດຍບໍ່ຍອມເຮັດຕາມວົງການຄຣິສຕຽນ ແລະ ບໍ່ຍອມຮັບວັນອາທິດ ເຊິ່ງເປັນວັນສະບາໂຕຂອງສັນຕະປາປາ. {GC 592.2}

ບັນດາຜູ້ນຳຄຣິສຕະຈັກ ແລະ ເຈົ້າໜ້າທີ່ລັດຈະຮ່ວມມືກັນເພື່ອໃຫ້ຄົນທຸກຊົນຊັ້ນນັບຖືວັນອາທິດ ໂດຍໃຊ້ເງິນລໍ້, ການຊັກຈູງ ແລະ ການບີບບັງຄັບ. ເນື່ອງຈາກບໍ່ມີພຣະຄຳພີສະໜັບສະໜູນ, ພວກເຂົາຈະນຳໃຊ້ກົດໝາຍມາກົດຂີ່ແທນ. ການສໍ້ລາດບັງຫຼວງເຮັດໃຫ້ຄົນບໍ່ຮັກຄວາມຍຸຕິທຳ ແລະ ບໍ່ເຫັນຄຸນຄ່າຂອງຄວາມຈິງ. ແມ່ນແຕ່ໃນດິນແດນອາເມຣິກາທີ່ຜູ້ຄົນມີສິດເສລີພາບ, ຝ່າຍການປົກຄອງ ແລະ ສະມາຊິກສະພາກໍຈະຍອມຕໍ່ການຮຽກຮ້ອງຂອງປະຊາຊົນທີ່ຕ້ອງການກົດໝາຍບັງຄັບໃຫ້ຮັກສາວັນອາທິດເພື່ອຈະໄດ້ຮັບຄວາມນິຍົມ. ເສລີພາບທາງຈິດສຳນຶກທີ່ໄດ້ມາດ້ວຍການເສຍສະຫຼະຢ່າງໃຫຍ່ຫຼວງຈະບໍ່ໄດ້ຮັບການເຄົາລົບອີກຕໍ່ໄປ. ໃນຄວາມຂັດແຍ້ງທີ່ຈະມາເຖິງໃນບໍ່ດົນນີ້, ພວກເຮົາຈະເຫັນຖ້ອຍຄຳຂອງຜູ້ເຜີຍພຣະທຳເປັນຈິງທີ່ວ່າ: “ຝ່າຍພະຍານາກກໍຄຽດແຄ້ນຢ່າງໃຫຍ່ໃຫ້ຍິ່ງນັ້ນ ແລະ ອອກໄປຕໍ່ສູ້ກັບເຊື້ອສາຍຂອງນາງທີ່ເຫຼືອຢູ່ ຄືທຸກຄົນທີ່ປະຕິບັດຕາມກົດບັນຍັດຂອງພຣະເຈົ້າ ແລະ ຍຶດຖືຄຳພະຍານຝ່າຍພຣະເຢຊູເຈົ້າ.” (ພຣະນິມິດ 12:17). {GC 592.3}

37

ພຣະຄຳພີ ໂລ້ປ້ອງກັນໄພ

ພຣະຄຳພີສຳຄັນກວ່າຄວາມຄິດເຫັນຂອງມະນຸດ

ພຣະຄຳພີກ່າວວ່າ: “ຈົ່ງຫາພຣະບັນຍັດກັບຄຳພະຍານແດ່ທ້ອນ. ຖ້າເຂົາບໍ່ເວົ້າຕາມຄວາມນີ້ ບໍ່ມີຮຸ່ງແຈ້ງສຳລັບພວກນັ້ນ.” (ເອຊາຢາ 8:20 ດັດແປງຈາກສະບັບລາວບູຮານ). ພຣະເຈົ້າຊົງນຳພາໄພ່ພົນຂອງພຣະອົງໃຫ້ຍຶດເອົາພຣະຄຳພີເປັນເຄື່ອງປ້ອງກັນພວກເຂົາຈາກອິດທິພົນຂອງພວກອາຈານທີ່ສອນຜິດ ແລະ ອຳນາດຫຼອກລວງຂອງວິນຍານຊົ່ວ. ຊາຕານພະຍາຍາມທຸກວິທີທາງເພື່ອຂັດຂວາງບໍ່ໃຫ້ຄົນໄດ້ຮູ້ພຣະຄຳພີ ເພາະຂໍ້ຄວາມທີ່ຈະແຈ້ງໃນພຣະຄຳນັ້ນເປີດໂປງການຫຼອກລວງຂອງມັນ. ທຸກຄັ້ງທີ່ມີການຟື້ນຟູວຽກງານຂອງພຣະເຈົ້າ ຊາຕານກໍຍິ່ງລຸກຮີ້ຂຶ້ນຕໍ່ສູ້ຢ່າງເຕັມກຳລັງ. ດຽວນີ້ມັນກຳລັງທຸ້ມເທຄວາມພະຍາຍາມຢ່າງເຕັມທີ່ເພື່ອຕໍ່ສູ້ກັບພຣະຄຣິສ ແລະ ຜູ້ຕິດຕາມພຣະອົງເປັນຄັ້ງສຸດທ້າຍ. ການຫຼອກລວງອັນຍິ່ງໃຫຍ່ຄັ້ງສຸດທ້າຍນັ້ນກຳລັງຈະປາກົດຂຶ້ນຕໍ່ໜ້າພວກເຮົາ. ຜູ້ຕໍ່ຕ້ານພຣະຄຣິສຈະສະແດງການອັດສະຈັນຕ່າງ ໆ ຕໍ່ໜ້າຕໍ່ຕາພວກເຮົາ. ການຫຼອກລວງນີ້ຈະຄ້າຍຄືຄວາມຈິງຫຼາຍຈົນບໍ່ສາມາດຈຳແນກໄດ້ ນອກຈາກຈະໃຊ້ພຣະຄຳພີເທົ່ານັ້ນ. ການອັດສະຈັນທຸກຢ່າງ ແລະ ຄຳເວົ້າທຸກຄຳຕ້ອງຖືກທົດສອບດ້ວຍພຣະຄຳພີ. *{GC 593.1}*

ຜູ້ທີ່ມຸ່ງໝັ້ນປະຕິບັດຕາມພຣະບັນຍັດທັງໝົດຂອງພຣະເຈົ້າຈະຖືກຕໍ່ຕ້ານ ແລະ ເຍາะເຍີ້ຍ. ພວກເຂົາຈະຢືນຢັດໄດ້ດ້ວຍການເພິ່ງພຣະເຈົ້າເທົ່ານັ້ນ. ເພື່ອໃຫ້ສາມາດອົດທົນຕໍ່ການທົດລອງທີ່ຈະມາເຖິງ, ພວກເຂົາຕ້ອງເຂົ້າໃຈນ້ຳພຣະໄທຂອງພຣະເຈົ້າທີ່ຊົງເປີດເຜີຍໄວ້ໃນພຣະຄຳຂອງພຣະອົງ. ພວກເຂົາຈະຖວາຍກຽດແດ່ພຣະອົງໄດ້ກໍຕໍ່ເມື່ອເຂົ້າໃຈຢ່າງຖືກຕ້ອງກ່ຽວກັບພຣະລັກສະນະ, ການປົກຄອງ ແລະ ພຣະປະສົງຂອງພຣະອົງ, ແລ້ວດຳເນີນຊີວິດໃຫ້ສອດຄ່ອງກັບສິ່ງເຫຼົ່ານັ້ນ. ມີແຕ່ຜູ້ທີ່ໄດ້ເສີມສ້າງຈິດໃຈດ້ວຍຄວາມຈິງຈາກພຣະຄຳພີເທົ່ານັ້ນທີ່ຈະຢືນໝັ້ນຄົງຢູ່ໄດ້ຈົນເຖິງທີ່ສຸດທ່າມກາງເຫດການຂັດແຍ້ງຄັ້ງຍິ່ງໃຫຍ່ທີ່ຈະເກີດຂຶ້ນ. ທຸກຄົນຈະຕ້ອງຜ່ານການທົດສອບທີ່ເລິກເຊິ່ງນີ້ວ່າ: “ຂ້າພະເຈົ້າຈະເຊື່ອຟັງພຣະເຈົ້າຫຼາຍກວ່າມະນຸດຫຼືບໍ່?” ເວລາແຫ່ງການຕັດສິນໃຈນັ້ນກຳລັງໃກ້ເຂົ້າມາແລ້ວ. ພວກເຮົາໄດ້ຢືນຢູ່ເທິງສິລາແຫ່ງພຣະຄຳຂອງພຣະເຈົ້າທີ່ບໍ່ປ່ຽນແປງແລ້ວບໍ? ພວກເຮົາພ້ອມແລ້ວບໍທີ່ຈະຢືນຢັດປົກປ້ອງພຣະບັນຍັດຂອງພຣະເຈົ້າ ແລະ ຄວາມເຊື່ອໃນພຣະເຢຊູ? *{GC 593.2}*

ກ່ອນທີ່ພຣະຜູ້ຊ່ວຍໃຫ້ລອດຈະຖືກຄຶງໄວ້ທີ່ໄມ້ກາງແຂນ ພຣະອົງຊົງອະທິບາຍແກ່ພວກສາວົກວ່າ ພຣະອົງຈະຖືກປະຫານຊີວິດ ແລະ ຈະຟື້ນຈາກຄວາມຕາຍ. ພວກທູດສະຫວັນຢູ່ທີ່ນັ້ນເພື່ອຊ່ວຍໃຫ້ພວກເຂົາຈົດຈຳພຣະຄຳຂອງພຣະອົງ. ແຕ່ພວກສາວົກພັດຄາດຫວັງແຕ່ການປົດປ່ອຍຈາກການປົກຄອງຂອງຊາວໂຣມເທົ່ານັ້ນ ຈຶ່ງບໍ່ສາມາດຍອມຮັບໄດ້ວ່າ ພຣະອົງຜູ້ທີ່ພວກເຂົາໄດ້ຝາກຄວາມຫວັງທັງໝົດໄວ້ນຳນັ້ນຈະຖືກປະຫານຢ່າງໜ້າອັບອາຍ. ພວກເຂົາລືມຖ້ອຍຄຳທີ່ຄວນຈົດຈຳໄວ້ ແລະ ເມື່ອເວລາແຫ່ງການທົດສອບມາເຖິງພວກເຂົາກໍບໍ່ພ້ອມ. ການສິ້ນພຣະຊົນຂອງພຣະເຢຊູເຮັດໃຫ້ພວກເຂົາ

ສິ້ນຫວັງ ເໝືອນກັບວ່າພຣະອົງບໍ່ເຄີຍເຕືອນພວກເຂົາມາກ່ອນ. ເຊັ່ນດຽວກັນ, ຄຳພະຍາກອນໄດ້ເປີດເຜີຍອະນາຄົດໃຫ້ພວກເຮົາເຫັນຢ່າງຈະແຈ້ງ ເໝືອນດັ່ງຖ້ອຍຄຳຂອງພຣະຄຣິສໄດ້ເປີດເຜີຍອະນາຄົດໃຫ້ແກ່ພວກສາວົກ. ເຫດການທີ່ກ່ຽວຂ້ອງກັບການສິ້ນສຸດຊ່ວງເວລາແຫ່ງພຣະກະລຸນາ ແລະ ການກຽມພ້ອມສຳລັບຍາມທຸກຍາກລຳບາກນັ້ນໄດ້ຖືກເປີດເຜີຍຢ່າງຈະແຈ້ງ. ແຕ່ຄົນສ່ວນຫຼາຍພັດບໍ່ເຂົ້າໃຈຄວາມຈິງອັນສຳຄັນເຫຼົ່ານີ້ ຄືກັບວ່າພຣະເຈົ້າບໍ່ເຄີຍບອກໃຫ້ພວກເຂົາຮູ້. ຊາຕານຄອຍດັກຈັບທຸກຄວາມຮູ້ສຶກທີ່ຈະນຳໄປສູ່ການຮຽນຮູ້ເລື່ອງຄວາມລອດ; ແລະເມື່ອເວລາແຫ່ງຄວາມທຸກຍາກລຳບາກມາເຖິງ ພວກເຂົາກໍຈະບໍ່ພ້ອມ. *{GC 594.1}*

ເມື່ອພຣະເຈົ້າສົ່ງຄຳຕັກເຕືອນທີ່ສຳຄັນຫຼາຍຈົນພຣະອົງຊົງໃຊ້ສັນຍະລັກຂອງເຫຼົ່າທູດສະຫວັນບໍຣິສຸດບິນປະກາດໃນທ້ອງຟ້າ, ພຣະອົງຊົງຕ້ອງການໃຫ້ທຸກຄົນທີ່ມີສະຕິປັນຍາຈົ່ງເຊື່ອຟັງຂ່າວສານນັ້ນ. ການພິພາກສາລົງໂທດອັນໜ້າຢ້ານກົວທີ່ປະກາດຕໍ່ການນະມັດສະການສັດຮ້າຍ ແລະ ຮູບຈຳລອງຂອງມັນ (ເບິ່ງ ພຣະນິມິດ 14:9–11) ຄວນເຮັດໃຫ້ທຸກຄົນສຶກສາຄຳພະຍາກອນຢ່າງຂະຫຍັນໝັ່ນພຽນເພື່ອຮຽນຮູ້ວ່າ ເຄື່ອງໝາຍຂອງສັດຮ້າຍແມ່ນຫຍັງ ແລະ ຈະຫຼີກລ່ຽງບໍ່ໃຫ້ຮັບມັນໄດ້ແນວໃດ. ແຕ່ຄົນສ່ວນຫຼາຍປິດຫູໃສ່ຄວາມຈິງ ແລະ ຫັນໄປເຊື່ອເລື່ອງນິຍາຍແທນ. ອັກຄະສາວົກໂປໂລໄດ້ເບິ່ງເຫັນລ່ວງໜ້າເຖິງຍຸກສຸດທ້າຍ ແລະ ປະກາດວ່າ: “ເວລານັ້ນຈະມາເຖິງ ເມື່ອຄົນທັງຫຼາຍຈະທົນກັບຄຳສອນອັນມີຫຼັກບໍ່ໄດ້.” (2 ຕີໂມທຽວ 4:3 LCV). ເວລານັ້ນກໍມາເຖິງແລ້ວ. ຄົນສ່ວນຫຼາຍບໍ່ຕ້ອງການຄວາມຈິງຈາກພຣະຄຳພີ ເພາະມັນຂັດກັບຄວາມປາຖະໜາຂອງຈິດໃຈທີ່ເຕັມໄປດ້ວຍຄວາມບາບ ແລະ ຫຼົງໄຫຼໃນຄວາມສຸກທາງໂລກ; ຊາຕານຈຶ່ງຫຼອກລໍ້ດ້ວຍສິ່ງທີ່ພວກເຂົາພໍໃຈ. *{GC 594.2}*

ພຣະເຈົ້າຈະມີຄົນກຸ່ມໜຶ່ງຢູ່ໃນໂລກທີ່ຍຶດແຕ່ພຣະຄຳພີພຽງຢ່າງດຽວເທົ່ານັ້ນເພື່ອເປັນມາດຕະຖານແຫ່ງຫຼັກຄຳສອນທັງໝົດ ແລະ ເປັນພື້ນຖານຂອງການປະຕິຮູບທຸກຢ່າງ. ພວກເຮົາບໍ່ຄວນພິສູດຫຼັກຄວາມເຊື່ອດ້ວຍສິ່ງອື່ນໃດເລີຍ ບໍ່ວ່າຈະເປັນແນວຄິດຂອງນັກວິຊາການ, ຂໍ້ສະຫຼຸບທາງວິທະຍາສາດ, ຫຼັກຄວາມເຊື່ອ ຫຼື ຄຳຕັດສິນຂອງສະພາຄຣິສຕະຈັກທີ່ມີຢ່າງຫຼວງຫຼາຍ ແລະ ຂັດແຍ້ງກັນຈາກຄຣິສຕະຈັກຕ່າງ ໆ ຫຼື ແມ່ນແຕ່ສ່ຽງສ່ວນຫຼາຍ. ສະນັ້ນ, ກ່ອນທີ່ຈະຮັບເອົາຄຳສອນໃດ ໆ, ພວກເຮົາຕ້ອງຮຽກຮ້ອງໃຫ້ມີການຢືນຢັນຢ່າງຈະແຈ້ງຈາກພຣະຄຳຂອງພຣະເຈົ້າເສຍກ່ອນ. *{GC 595.1}*

ຊາຕານລໍ້ລວງໃຫ້ເບິ່ງທີ່ມະນຸດ

ຊາຕານພະຍາຍາມຢູ່ຕະຫຼອດເວລາທີ່ຈະໃຫ້ຜູ້ຄົນຈົດຈໍ່ຢູ່ກັບມະນຸດແທນທີ່ຈະໃສ່ໃຈໃນພຣະເຈົ້າ. ມັນຊັກນຳໃຫ້ມະນຸດເພິ່ງພາຜູ້ນຳສາສະໜາ, ອາຈານປະຈຳໂບດ ແລະ ອາຈານສອນສາສະໜາສາດແທນທີ່ຈະຄົ້ນຄວ້າພຣະຄຳພີດ້ວຍຕົນເອງເພື່ອຮຽນຮູ້ໜ້າທີ່ຂອງຕົນ. ດ້ວຍວິທີນີ້, ເມື່ອມັນຄວບຄຸມຈິດໃຈຂອງຜູ້ນຳເຫຼົ່ານີ້ໄດ້ ມັນກໍສາມາດຊັກຈູງມວນຊົນໄປຕາມທາງຂອງມັນ. *{GC 595.2}*

ເມື່ອພຣະຄຣິສສະເດັດມາໃນໂລກເພື່ອປະກາດພຣະຄຳແຫ່ງຊີວິດ, ຄົນທຳມະດາຍິນດີຮັບຟັງພຣະອົງ ແລະ ມີຫຼາຍຄົນຮັບເຊື່ອໃນພຣະອົງ, ຮວມທັງປະໂຣຫິດ ແລະ ຜູ້ປົກຄອງບາງຄົນດ້ວຍ. ແຕ່ບັນດາຫົວໜ້າປະໂຣຫິດ ແລະ ຜູ້ນຳຂອງປະເທດໄດ້ຕັ້ງໃຈຢ່າງແນ່ວແນ່ທີ່ຈະປະນາມ ແລະ ປະຕິເສດຄຳສອນຂອງພຣະອົງ. ພວກເຂົາພະຍາຍາມທຸກວິທີທາງເພື່ອຫາຂໍ້ກ່າວຫາຕໍ່ພຣະອົງ ແຕ່ກໍບໍ່ສຳເລັດ. ເຖິງແມ່ນວ່າພວກເຂົາຮູ້ສຶກວ່າຖ້ອຍຄຳຂອງພຣະອົງເຕັມໄປດ້ວຍຣິດອຳນາດ ແລະ ພຣະປັນຍາຂອງພຣະເຈົ້າ ແຕ່ພວກເຂົາປ່ອຍໃຫ້ອະຄະຕິຄອບງຳຈິດໃຈ. ພວກເຂົາປະຕິເສດຫຼັກຖານອັນຈະແຈ້ງທີ່ສຸດທີ່ຢືນຢັນວ່າພຣະອົງຊົງເປັນພຣະເມຊີອາ ເພາະບໍ່ຢາກຍອມຮັບຄວາມຈິງທີ່ຈະນຳພາພວກເຂົາໃຫ້ເປັນ

ສາວົກຂອງພຣະອົງ. ພວກຜູ້ນຳເຫຼົ່ານີ້ທີ່ຕໍ່ຕ້ານພຣະເຢຊູ ເປັນຄົນທີ່ປະຊາຊົນຖືກສອນໃຫ້ເຄົາລົບນັບຖືມາຕັ້ງແຕ່ນ້ອຍ, ເປັນຜູ້ທີ່ປະຊາຊົນເຄີຍເຊື່ອຟັງຢ່າງບໍ່ມີຂໍ້ສົງໄສ. ຄົນທັງຫຼາຍຈຶ່ງຖາມກັນວ່າ: "ເປັນຫຍັງພວກຜູ້ປົກຄອງ ແລະ ທຳມະຈານຈຶ່ງບໍ່ເຊື່ອໃນພຣະເຢຊູ? ຖ້າພຣະອົງເປັນພຣະຄຣິສແທ້ ພວກຄົນເຄົ່ງສາສະໜາເຫຼົ່ານີ້ຄົງຈະຕ້ອນຮັບພຣະອົງບໍ່ແມ່ນບໍ?" ດ້ວຍອິດທິພົນຂອງອາຈານເຫຼົ່ານີ້ເອງທີ່ພາໃຫ້ຊາວຢິວທັງຊາດປະຕິເສດພຣະຜູ້ໄຖ່ຂອງພວກເຂົາ. *{GC 595.3}*

ແນວຄິດທີ່ຊັກນຳພວກປະໂຣຫິດ ແລະ ຜູ້ປົກຄອງໃນສະໄໝກ່ອນກໍຍັງປາກົດຢູ່ໃນຄົນຈຳນວນຫຼາຍທີ່ອວດອ້າງວ່າ ຕົນເປັນຄົນເຄົ່ງສາສະໜາ. ພວກເຂົາປະຕິເສດທີ່ຈະພິຈາລະນາຄຳສອນໃນພຣະຄຳພີກ່ຽວກັບຄວາມຈິງທີ່ມີຄວາມສຳຄັນພິເສດສຳລັບຍຸກນີ້. ພວກເຂົາອວດອ້າງເຖິງຈຳນວນສະມາຊິກອັນຫຼວງຫຼາຍ, ຄວາມຮັ່ງມີ ແລະ ການທີ່ພວກເຂົາເປັນທີ່ນິຍົມຂອງຄົນທົ່ວໄປ ແຖມຍັງດູຖູກຜູ້ປະກາດຄວາມຈິງເພາະມີຈຳນວນໜ້ອຍ, ຍາກຈົນ ແລະ ບໍ່ເປັນທີ່ນິຍົມ, ທັງມີຄວາມເຊື່ອທີ່ແຍກພວກເຂົາອອກຈາກແນວທາງຂອງຊາວໂລກ. *{GC 596.1}*

ພຣະຄຣິສຊົງເຫັນລ່ວງໜ້າແລ້ວວ່າ ການສອຍໃຊ້ອຳນາດເກີນຂອບເຂດແບບທີ່ພວກທຳມະຈານ ແລະ ພວກຟາຣີຊາຍເຄີຍເຮັດນັ້ນ ຈະບໍ່ສິ້ນສຸດລົງກັບການແຕກກະຈັດກະຈາຍຂອງຊາວຢິວ. ພຣະອົງຊົງເຫັນລ່ວງໜ້າເຖິງການຍົກຍໍອຳນາດຂອງມະນຸດເພື່ອຄວບຄຸມຈິດສຳນຶກ, ເຊິ່ງເປັນດັ່ງຄຳສາບແຊ່ງອັນໜ້າຢ້ານຕໍ່ຄຣິສຕະຈັກໃນທຸກຍຸກທຸກສະໄໝ. ພຣະອົງຊົງປະນາມພວກທຳມະຈານ ແລະ ພວກຟາຣີຊາຍຢ່າງແຮງກ້າ, ພ້ອມທັງເຕືອນບໍ່ໃຫ້ປະຊາຊົນປະຕິບັດຕາມຜູ້ນຳທີ່ຕາບອດເຫຼົ່ານີ້. ຄຳເຕືອນເຫຼົ່ານີ້ໄດ້ຖືກບັນທຶກໄວ້ເພື່ອເປັນບົດຮຽນແກ່ຄົນລຸ້ນຕໍ່ ໆ ມາ. *{GC 596.2}*

ຄຣິສຕະຈັກໂຣມັນກາໂຕລິກສະຫງວນສິດໃນການຕີຄວາມໝາຍພຣະຄຳພີໄວ້ສຳລັບອາຈານສອນສາສະໜາເທົ່ານັ້ນ. ພວກເຂົາອ້າງວ່າມີແຕ່ບາດຫຼວງເທົ່ານັ້ນທີ່ມີຄວາມສາມາດອະທິບາຍພຣະຄຳຂອງພຣະເຈົ້າໄດ້; ດັ່ງນັ້ນ, ພຣະຄຳພີຈຶ່ງຖືກປິດກັ້ນໄວ້ຈາກສະມາຊິກທົ່ວໄປ.[1] ເຖິງແມ່ນວ່າຂະບວນການປະຕິຮູບເຮັດໃຫ້ທຸກຄົນສາມາດເຂົ້າເຖິງພຣະຄຳພີໄດ້, ແຕ່ຫຼັກການດຽວກັນກັບທີ່ຄຣິສຕະຈັກໂຣມໄດ້ຍຶດຖືນັ້ນກໍຍັງຂັດຂວາງຄົນ ຈຳນວນຫຼາຍໃນຄຣິສຕະຈັກໂປຣແຕັສຕັງ ຈາກ ການສຶກສາ ພຣະຄຳພີດ້ວຍຕົນເອງ. ພວກເຂົາຖືກສອນໃຫ້ ຮັບເອົາ*ການຕີຄວາມໝາຍພຣະຄຳພີຂອງຄຣິສຕະຈັກ*ເທົ່ານັ້ນ. ດ້ວຍເຫດນີ້, ເຖິງແມ່ນວ່າ ພຣະຄຳພີຈະເປີດເຜີຍຢ່າງຈະແຈ້ງແລ້ວກໍຕາມ ຄົນຈຳນວນຫຼາຍບໍ່ກ້າຮັບເອົາຄຳສອນໃດ ໆ ທີ່ຂັດກັບຫຼັກຄວາມເຊື່ອ ຫຼື ຄຳສອນທີ່ຄຣິສຕະຈັກຂອງຕົນກຳນົດໄວ້. *{GC 596.3}*

ເຖິງແມ່ນວ່າ ພຣະຄຳພີມີຄຳເຕືອນຫຼາຍຢ່າງກ່ຽວກັບຜູ້ສອນປອມ, ຫຼາຍຄົນກໍຍັງພ້ອມທີ່ຈະມອບຈິດວິນຍານຂອງຕົນໄວ້ກັບສາສະໜາຈານ. ທຸກວັນນີ້, ມີຄຣິສຕຽນຫຼາຍຄົນທີ່ບໍ່ສາມາດອະທິບາຍຫຼັກຄວາມເຊື່ອຂອງຕົນໄດ້ ນອກຈາກຈະເວົ້າວ່າ ຜູ້ນຳສາສະໜາສອນພວກເຂົາແນວນັ້ນ. ພວກເຂົາແທບບໍ່ໄດ້ສົນໃຈໃນຄຳສອນຂອງພຣະຜູ້ຊ່ວຍໃຫ້ລອດ ແຕ່ກັບເຊື່ອຖືຖ້ອຍຄຳຂອງສາສະໜາຈານ ໂດຍບໍ່ມີຂໍ້ສົງໄສ. ພວກສາສະໜາຈານບໍ່ສາມາດຜິດພາດໄດ້ບໍ? ພວກເຮົາຈະຝາກຈິດວິນຍານໄວ້ໃຫ້ພວກເຂົານຳພາໄດ້ຢ່າງໃດ ນອກຈາກຈະແນ່ໃຈວ່າ ພວກເຂົາສອນຕາມພຣະຄຳພີ? ຍ້ອນບໍ່ກ້າແຕກຕ່າງຈາກຄົນອື່ນ ຫຼາຍຄົນຈຶ່ງພາກັນເດີນຕາມຮອຍຂອງຄົນມີການສຶກສາ; ແລະເພາະບໍ່ຍອມຊອກຫາຄວາມຈິງດ້ວຍຕົນເອງ ພວກເຂົາຈຶ່ງຕິດຢູ່ໃນຄວາມບໍ່ຈິງແບບບໍ່ມີທາງອອກ. ພວກເຂົາເຫັນຄວາມຈິງທີ່ມີຄວາມສຳຄັນພິເສດສຳລັບຍຸກນີ້ປາກົດຢ່າງຈະແຈ້ງໃນພຣະຄຳພີ ແລະ ຮູ້ສຶກເຖິງຣິດອຳນາດຂອງພຣະວິນຍານບໍຣິສຸດໃນການປະກາດ ແຕ່ກໍຍອມໃຫ້ການຕໍ່ຕ້ານຂອງພວກຜູ້ສອນສາສະໜາທັນຈິດໃຈຂອງພວກເຂົາອອກ

[1] ການຫ້າມບໍ່ໃຫ້ປະຊາຊົນອ່ານພຣະຄຳພີ ແມ່ນນະໂຍບາຍກ່ອນສະພາວາຕິກັນທີສອງ. ປັດຈຸບັນ, ຄຣິສຕະຈັກກາໂຕລິກອະນຸຍາດໃຫ້ອ່ານພຣະຄຳພີໄດ້ ແຕ່ຍັງສະຫງວນສິດໃນການຕີຄວາມໝາຍຕາມປະເພນີຂອງຕົນ.

ຈາກຄວາມສະຫວ່າງ. ເຖິງແມ່ນວ່າ ຈິດສຳນຶກ ແລະ ການຄິດເປັນເຫດເປັນຜົນຂອງພວກເຂົາຢືນຢັນ ເຖິງຄວາມຈິງ, ແຕ່ຄົນທີ່ຫຼົງໄຫຼເຫຼົ່ານີ້ກໍບໍ່ກ້າຄິດແຕກຕ່າງຈາກສາສະໜາຈານ. ສຸດທ້າຍ, ພວກເຂົາ ຈຶ່ງເສຍສະຫຼະການຕັດສິນໃຈສ່ວນຕົວ ແລະ ຊີວິດນິຣັນຂອງຕົນໃຫ້ຂຶ້ນຢູ່ກັບຄົນຈອງຫອງທີ່ຂາດ ຄວາມເຊື່ອ ແລະ ເຕັມໄປດ້ວຍອະຄະຕິ. *{GC 596.4}*

ຊາຕານມີຫຼາຍວິທີໃນການມັດຄົນໄວ້ເປັນຊະເລີຍຂອງມັນໂດຍໃຊ້ມະນຸດເປັນເຄື່ອງມື. ມັນໄດ້ດຶງດູດ ຄົນຈຳນວນຫຼວງຫຼາຍມາເປັນຂອງມັນ ໂດຍການຜູກມັດພວກເຂົາໄວ້ກັບຜູ້ທີ່ເປັນສັດຕູຕໍ່ໄມ້ກາງແຂນຂອງ ພຣະຄຣິສດ້ວຍສາຍໃຍແຫ່ງຄວາມຮັກ. ບໍ່ວ່າຈະເປັນສາຍສຳພັນລະຫວ່າງພໍ່ແມ່ລູກ, ພີ່ນ້ອງ, ຜົວເມຍ ຫຼື ໝູ່ເພື່ອນກໍຕາມ, ຜົນກໍຄືກັນ: ຜູ້ທີ່ຕໍ່ຕ້ານຄວາມຈິງໃຊ້ອຳນາດຂອງຕົນຄວບຄຸມຈິດສຳນຶກ ແລະ ຜູ້ ທີ່ຕົກຢູ່ໃຕ້ອິດທິພົນຂອງພວກເຂົາກໍບໍ່ມີຄວາມກ້າຫານ ຫຼື ຄວາມເປັນຕົວຂອງຕົວເອງພຽງພໍທີ່ຈະເຮັດ ຕາມສຽງເຕືອນພາຍໃນຈິດໃຈຂອງຕົນເອງ. *{GC 597.1}*

ໜ້າທີ່ອັນສຳຄັນທີ່ສຸດຂອງມະນຸດ

ຄວາມຈິງກັບສະຫງ່າຣາສີຂອງພຣະເຈົ້າແຍກຈາກກັນບໍ່ໄດ້. ສະນັ້ນ, ເມື່ອພວກເຮົາມີພຣະຄຳພີ ຢູ່ແລ້ວ, ຈຶ່ງເປັນໄປບໍ່ໄດ້ທີ່ຈະຖວາຍກຽດແດ່ພຣະເຈົ້າດ້ວຍຄວາມເຊື່ອຖືທີ່ຜິດໄປຈາກຄວາມຈິງ. ຫຼາຍ ຄົນອ້າງວ່າຈະເຊື່ອແນວໃດກໍໄດ້ ຂໍພຽງແຕ່ດຳເນີນຊີວິດໃຫ້ຖືກຕ້ອງ. ແຕ່ຄວາມເຊື່ອຕ່າງຫາກທີ່ເປັນຕົວ ຫຼໍ່ຫຼອມຊີວິດ. ຖ້າແສງສະຫວ່າງ ແລະ ຄວາມຈິງຢູ່ຕໍ່ໜ້າພວກເຮົາ ແຕ່ພວກເຮົາບໍ່ຍອມສວຍເອົາ ໂອກາດທີ່ຈະໄດ້ຍິນ ແລະ ໄດ້ຮັບຮູ້ຄວາມຈິງນັ້ນ, ກໍເທົ່າກັບເປັນການປະຕິເສດຄວາມຈິງ ແລະ ເປັນ ການເລືອກເອົາຄວາມມືດແທນທີ່ຈະເລືອກເອົາຄວາມສະຫວ່າງ. *{GC 597.2}*

“ມີທາງໜຶ່ງເຊິ່ງຄົນເຮົາເບິ່ງຄືຖືກຕ້ອງ ແຕ່ມັນສິ້ນສຸດລົງທີ່ທາງແຫ່ງຄວາມມໍຣະນາ.” (ສຸພາສິດ 16:25 ດັດແປງຈາກສະບັບ TKJV). ໃນເມື່ອມີໂອກາດຫຼາຍທີ່ສຸດທີ່ຈະຮູ້ຈັກພຣະປະສົງຂອງພຣະເຈົ້າ ໄດ້, ການທີ່ຈະອ້າງວ່າ “ຂ້ອຍບໍ່ຮູ້” ນັ້ນ ບໍ່ແມ່ນຂໍ້ແກ້ຕົວສຳລັບການເຊື່ອຖືທີ່ຜິດ ຫຼື ການເຮັດ ບາບ. ສົມມຸດວ່າມີຄົນໜຶ່ງກຳລັງເດີນທາງ ແລະ ມາເຖິງບ່ອນທີ່ມີຫຼາຍເສັ້ນທາງພ້ອມກັບປ້າຍບອກທິດ ທາງທີ່ສະແດງວ່າ ຫົນທາງແຕ່ລະເສັ້ນນຳພາໄປໃສ. ຖ້າລາວບໍ່ເອົາໃຈໃສ່ປ້າຍບອກທາງ ແລະ ເລືອກ ເດີນໄປຕາມເສັ້ນທາງທີ່ລາວເຫັນວ່າຖືກ, ລາວອາດຈະມີຄວາມໝັ້ນໃຈຫຼາຍທີ່ສຸດກໍຕາມ, ແຕ່ມີໂອກາດ ສູງທີ່ລາວຈະພົບວ່າ ຕົນເອງຢູ່ໃນເສັ້ນທາງທີ່ຜິດ. *{GC 597.3}*

ພຣະເຈົ້າປະທານພຣະຄຳຂອງພຣະອົງເພື່ອໃຫ້ພວກເຮົາຮຽນຮູ້ດ້ວຍຕົນເອງເຖິງຄຳສອນ ແລະ ໜ້າທີ່ທີ່ພຣະອົງຊົງມອບໝາຍໃຫ້ພວກເຮົາ. ເມື່ອທຳມະບັນດິດຄົນໜຶ່ງມາຫາພຣະເຢຊູ ແລະ ຖາມ ວ່າ “ຂ້ານ້ອຍຈະຕ້ອງເຮັດຢ່າງໃດ ຈຶ່ງຈະໄດ້ຮັບຊີວິດນິຣັນດອນ?” ພຣະຜູ້ຊ່ວຍໃຫ້ລອດຊົງຊີ້ໃຫ້ເພິ່ນ ພິຈາລະນາພຣະຄຳພີ ໂດຍຖາມວ່າ “ກົດບັນຍັດມີຂຽນໄວ້ວ່າຢ່າງໃດ? ເມື່ອທ່ານອ່ານແລ້ວ ເຂົ້າໃຈ ຢ່າງໃດ?” (ລູກາ 10:25, 26). ບໍ່ວ່າຈະເປັນຄົນໜຸ່ມ ຫຼື ຄົນແກ່ ແຕ່ການທີ່ຜູ້ຄົນຈະຂາດຄວາມ ຮູ້ບໍ່ແມ່ນຂໍ້ແກ້ຕົວ, ທັງບໍ່ສາມາດຊ່ວຍພວກເຂົາໃຫ້ພົ້ນຈາກການຖືກລົງໂທດເນື່ອງຈາກການລະເມີດ ພຣະບັນຍັດຂອງພຣະເຈົ້າ, ເພາະວ່າພວກເຂົາມີພຣະຄຳພີທີ່ເປີດເຜີຍພຣະບັນຍັດໄວ້ຢ່າງຈະແຈ້ງ ທັງ ສະແດງໃຫ້ເຫັນເຖິງຫຼັກການ ແລະ ໜ້າທີ່ໃນການຮັກສາພຣະບັນຍັດນັ້ນ. ການມີຄວາມຕັ້ງໃຈດີ ບໍ່ພຽງພໍ, ການເຮັດຕາມສິ່ງທີ່ມະນຸດເຫັນວ່າຖືກ ຫຼື ສິ່ງທີ່ສາສະໜາຈານບອກວ່າຖືກຕ້ອງກໍຍັງບໍ່ ພຽງພໍ. ຄວາມລອດພົ້ນຂອງມະນຸດແມ່ນສິ່ງທີ່ສຳຄັນຫຼາຍ; ດັ່ງນັ້ນ, ທຸກຄົນຈຶ່ງຄວນຄົ້ນຄວ້າພຣະຄຳພີ ດ້ວຍຕົນເອງ. ເຖິງແມ່ນວ່າ ເຂົາຈະມີຄວາມເຊື່ອໝັ້ນພຽງໃດ ຫຼື ໝັ້ນໃຈວ່າສາສະໜາຈານຮູ້ຄວາມ

ຈິງ, ນີ້ກໍບໍ່ແມ່ນຮາກຖານທີ່ເຂົາຄວນຢຶດໄວ້; ເພາະເຂົາມີແຜນທີ່ທີ່ຊີ້ບອກທຸກ ໆ ຈຸດໝາຍໃນການເດີນທາງໄປສະຫວັນ ແລະ ບໍ່ຄວນມີການຄາດເດົາໃນເລື່ອງໃດເລີຍ. *{GC 598.1}*

ໜ້າທີ່ທຳອິດ ແລະ ສຳຄັນທີ່ສຸດຂອງມະນຸດທຸກຄົນ ຄືການຮຽນຮູ້ຄວາມຈິງຈາກພຣະຄຳພີ ແລ້ວດຳເນີນຊີວິດຕາມແສງສະຫວ່າງທີ່ໄດ້ຮັບ ພ້ອມທັງຊັກຈູງຜູ້ອື່ນໃຫ້ເຮັດຕາມແບບຢ່າງຂອງຕົນ. ທຸກມື້ທຸກວັນ ພວກເຮົາຄວນສຶກສາພຣະຄຳພີດ້ວຍຄວາມຂະຫຍັນໝັ່ນພຽນ ໂດຍການນຳຂໍ້ພຣະຄຳພີຕ່າງ ໆ ມາປຽບທຽບກັນ ແລະ ການພິຈາລະນາຂໍ້ຄິດທຸກຢ່າງ. ພວກເຮົາຕ້ອງອາໄສຄວາມຊ່ວຍເຫຼືອຈາກພຣະເຈົ້າໃນການຫາຈຸດຢືນຂອງຕົນ, ເພາະວ່າໃນທີ່ສຸດ ພວກເຮົາຈະຕ້ອງຮັບຜິດຊອບຕໍ່ພຣະເຈົ້າດ້ວຍຕົນເອງ. *{GC 598.2}*

ນັກວິຊາການໄດ້ບິດເບືອນ ແລະ ຕັ້ງຂໍ້ສົງໄສໃຫ້ກັບຄວາມຈິງອັນແຈ່ມແຈ້ງທີ່ສຸດໃນພຣະຄຳພີ. ຄົນເຫຼົ່ານີ້ອວດອ້າງວ່າ ຕົນມີປັນຍາອັນລ້ຳເລີດ ແລະ ສອນວ່າ ພຣະຄຳພີເຊື່ອງຊ່ອນຄວາມໝາຍອັນເລິກລັບທີ່ຄົນເຮົາບໍ່ສາມາດເຂົ້າໃຈໄດ້ຕາມຕົວອັກສອນ. ຄົນເຫຼົ່ານີ້ເປັນອາຈານທຽມເທັດ. ພຣະເຢຊູໄດ້ກ່າວເຖິງຄົນປະເພດນີ້ວ່າ: “ພວກເຈົ້າບໍ່ຮູ້ຈັກພຣະຄຳພີ ຫຼື ຣິດອຳນາດຂອງພຣະເຈົ້າ.” (ມາຣະໂກ 12:24). ພວກເຮົາຄວນອະທິບາຍພຣະຄຳພີກົ້ງໄປກົ້ງມາຕາມເນື້ອຄວາມທີ່ປາກົດຢູ່ໃນພຣະຄຳພີແຕ່ລະຕອນ, ເວັ້ນເສຍແຕ່ຈະເປັນການສົມທຽບ ຫຼື ການໃຊ້ຄຳອຸປະມາອຸປະໄມ. ພຣະຄຣິສຊົງສັນຍາໄວ້ວ່າ: “ຖ້າຜູ້ໃດເລືອກທີ່ຈະເຮັດຕາມຄວາມປະສົງຂອງພຣະເຈົ້າ ຜູ້ນັ້ນກໍຈະຮູ້ວ່າຄຳສອນຂອງເຮົາມາຈາກພຣະເຈົ້າ.” (ໂຢຮັນ 7:17 LCV). ຖ້າຫາກຜູ້ຄົນພຽງແຕ່ຍອມຮັບເອົາພຣະຄຳພີຕາມທີ່ຂຽນໄວ້ ແລະ ຖ້າບໍ່ມີອາຈານປອມທີ່ພາໃຫ້ຫຼົງທາງ ແລະ ເຮັດໃຫ້ສັບສົນ, ການປະກາດຈະສຳເລັດຈົນເຮັດໃຫ້ເຫຼົ່າທູດສະຫວັນຍິນດີ ແລະ ຈະນຳພາຜູ້ຄົນຈຳນວນຫຼວງຫຼາຍທີ່ກຳລັງຫຼົງໄຫຼໃນຫ້ວງເຫວແຫ່ງຄວາມບໍ່ຈິງໃຫ້ເຂົ້າມາຮັບເຊື່ອໃນພຣະຄຣິສ. *{GC 598.3}*

ພວກເຮົາຄວນໃຊ້ກຳລັງຄວາມຄິດທັງໝົດໃນການສຶກສາພຣະຄຳພີ ແລະ ຄວນພະຍາຍາມທຳຄວາມເຂົ້າໃຈເຖິງຄວາມຈິງອັນເລິກເຊິ່ງຂອງພຣະເຈົ້າເທົ່າທີ່ມະນຸດຈະເຂົ້າໃຈໄດ້. ເຖິງຢ່າງໃດກໍຕາມ, ພວກເຮົາບໍ່ຄວນລືມວ່າ ຄຸນສົມບັດທີ່ແທ້ຈິງຂອງຜູ້ຮຽນແມ່ນການນອບນ້ອມຖ່ອມຕົນ ແລະ ຍອມຟັງຄຳສອນເໝືອນເດັກນ້ອຍ. ຄວາມຊັບຊ້ອນໃນພຣະຄຳພີບໍ່ສາມາດເຂົ້າໃຈໄດ້ດ້ວຍວິທີດຽວກັນທີ່ໃຊ້ໃນການເຂົ້າໃຈແນວຄິດທາງປັດຊະຍາ. ພວກເຮົາບໍ່ຄວນສຶກສາພຣະຄຳພີດ້ວຍການເພິ່ງພາຕົນເອງແບບທີ່ຫຼາຍຄົນມັກໃຊ້ໃນການສຶກສາວິທະຍາສາດ, ແຕ່ຄວນເພິ່ງພາພຣະເຈົ້າດ້ວຍການອະທິຖານ ແລະ ດ້ວຍຄວາມປາຖະໜາຢາກຮູ້ພຣະປະສົງຂອງພຣະອົງຢ່າງແທ້ຈິງ. ພວກເຮົາຕ້ອງມາຫາພຣະອົງດ້ວຍຄວາມຖ່ອມໃຈ ແລະ ພ້ອມທີ່ຈະຮັບການສິດສອນ ເພື່ອຈະໄດ້ຮັບຄວາມຮູ້ຈາກພຣະເຈົ້າຜູ້ຊົງດຳລົງຢູ່ເປັນນິດ. ຖ້າບໍ່ດັ່ງນັ້ນ, ວິນຍານຊົ່ວຈະເຮັດໃຫ້ຈິດໃຈຂອງພວກເຮົາມືດບອດ ແລະ ແຂງກະດ້າງ ຈົນບໍ່ສາມາດເຂົ້າເຖິງຄວາມຈິງໄດ້. *{GC 599.1}*

ພຣະຄຳພີຫຼາຍຕອນທີ່ນັກວິຊາການບາງຄົນເຫັນວ່າມີຄວາມເລິກລັບ ຫຼື ບໍ່ໃຫ້ຄວາມສຳຄັນ ກັບເຕັມໄປດ້ວຍຄວາມເລົ້າໂລມໃຈ ແລະ ຄຳແນະນຳສຳລັບຜູ້ທີ່ໄດ້ຮຽນຮູ້ຈາກພຣະຄຣິສ. ສາເຫດໜຶ່ງທີ່ນັກສາສະໜາສາດຫຼາຍຄົນບໍ່ເຂົ້າໃຈພຣະຄຳຂອງພຣະເຈົ້າຢ່າງແຈ່ມແຈ້ງ ກໍຍ້ອນວ່າພວກເຂົາປິດຕາຂອງຕົນຕໍ່ຄວາມຈິງທີ່ພວກເຂົາບໍ່ຢາກປະຕິບັດ. ການເຂົ້າໃຈຄວາມຈິງໃນພຣະຄຳພີບໍ່ໄດ້ຂຶ້ນກັບຄວາມສະຫຼາດເທົ່າກັບຄວາມມຸ່ງໝັ້ນ ແລະ ຄວາມປາຖະໜາຢ່າງແຮງກ້າທີ່ຈະໄດ້ຮັບຄວາມຊອບທຳ. *{GC 599.2}*

ຈົ່ງອະທິຖານ ແລະ ສຶກສາພຣະຄຳພີ

ການສຶກສາພຣະຄຳພີຕ້ອງຄຽງຄູ່ກັບການອະທິຖານສະເໝີ. ມີແຕ່ພຣະວິນຍານບໍຣິສຸດເທົ່ານັ້ນ ທີ່ສາມາດເຮັດໃຫ້ພວກເຮົາເຫັນຄວາມສຳຄັນຂອງສິ່ງທີ່ເຂົ້າໃຈງ່າຍ ແລະ ປ້ອງກັນພວກເຮົາຈາກການບິດເບືອນຄວາມໝາຍຂອງຂໍ້ພຣະຄຳທີ່ເຂົ້າໃຈຍາກ. ເປັນໜ້າທີ່ຂອງເຫຼົ່າທູດສະຫວັນທີ່ຈະຈັດຕຽມຈິດໃຈຂອງພວກເຮົາໃຫ້ເຂົ້າໃຈພຣະຄຳຂອງພຣະເຈົ້າ ເພື່ອພວກເຮົາຈະປະທັບໃຈໃນຄວາມງົດງາມຂອງພຣະຄຳນັ້ນ, ຮັບເອົາຄຳຕັກເຕືອນ ແລະ ມີກຳລັງໃຈຂຶ້ນຈາກພຣະສັນຍາຂອງພຣະອົງ. ພວກເຮົາຄວນອະທິຖານຕາມຄຳທູນຂໍຂອງຜູ້ຂຽນພຣະທຳເພງສັນລະເສີນວ່າ: “ຂໍຊົງໂຜດເປີດຕາຂອງຂ້ານ້ອຍ ເພື່ອຂ້ານ້ອຍຈະໄດ້ເຫັນຄວາມຈິງອັນອັດສະຈັນຢູ່ໃນກົດບັນຍັດນັ້ນ.” (ເພງສັນລະເສີນ 119:18). ຫຼາຍຄັ້ງການທົດລອງເບິ່ງຄືວ່າຈະຕ້ານທານບໍ່ໄດ້ ເພາະເມື່ອໃດຄົນລະເລີຍການອະທິຖານ ແລະ ບໍ່ໄດ້ສຶກສາພຣະຄຳພີ ເຂົາກໍຈະບໍ່ສາມາດຈື່ຈຳພຣະສັນຍາຂອງພຣະເຈົ້າ ຈຶ່ງບໍ່ມີອາວຸດຈາກພຣະຄຳພີໄວ້ຕໍ່ສູ້ກັບຊາຕານ. ແຕ່ເຫຼົ່າທູດສະຫວັນຢູ່ອ້ອມຮອບຄົນທີ່ເຕັມໃຈຮຽນຮູ້ເລື່ອງຂອງພຣະເຈົ້າ, ແລະໃນຍາມຈຳເປັນ ທູດສະຫວັນຈະເຕືອນພວກເຂົາໃຫ້ລະນຶກເຖິງຄວາມຈິງທີ່ພວກເຂົາຕ້ອງການພໍດີໃນເວລານັ້ນ, ດັ່ງທີ່ພຣະຄຳພີກ່າວວ່າ: “ເມື່ອສັດຕູຈະມາຄືແມ່ນ້ຳ, ພຣະວິນຍານຂອງພຣະເຢໂຮວາຈະຍົກທຸງຕໍ່ສູ້ເຂົາ.” (ເອຊາຢາ 59:19 ສະບັບລາວບູຮານ). *{GC 599.3}*

ພຣະເຢຊູຊົງສັນຍາກັບພວກສາວົກຂອງພຣະອົງວ່າ: “ພຣະຜູ້ຊ່ວຍຄືອົງພຣະວິນຍານບໍຣິສຸດເຈົ້າ ຜູ້ທີ່ພຣະບິດາເຈົ້າຈະໃຊ້ມາໃນນາມຂອງເຮົາ ຈະສັ່ງສອນທຸກສິ່ງແກ່ພວກເຈົ້າ ແລະ ຈະເຕືອນພວກເຈົ້າໃຫ້ລະນຶກເຖິງທຸກສິ່ງທີ່ເຮົາໄດ້ກ່າວກັບພວກເຈົ້າ.” (ໂຢຮັນ 14:26 LCV). ເຖິງຢ່າງໃດກໍຕາມ, ພວກເຮົາຕ້ອງເກັບຮັກສາຄຳສອນຂອງພຣະຄຣິສໄວ້ໃນຈິດໃຈເສຍກ່ອນ, ພຣະວິນຍານບໍຣິສຸດຈຶ່ງຈະສາມາດນຳມັນອອກມາເຕືອນສະຕິພວກເຮົາໃນຍາມອັນຕະລາຍໄດ້. ດັ່ງທີ່ກະສັດດາວິດໄດ້ກ່າວວ່າ: “ຂ້ານ້ອຍຖືຮັກສາຖ້ອຍຄຳຂອງພຣະອົງໄວ້ຢູ່ໃນຈິດໃຈ ເພື່ອວ່າຈະບໍ່ໄດ້ເຮັດບາບຕໍ່ສູ້ພຣະອົງ.” (ເພງສັນລະເສີນ 119:11). *{GC 600.1}*

ທຸກຄົນທີ່ເຫັນຄຸນຄ່າຂອງຊີວິດນິຣັນຕ້ອງລະວັງບໍ່ໃຫ້ຄວາມສົງໄສເຂົ້າມາທຳລາຍຄວາມເຊື່ອ. ເສົາຫຼັກແຫ່ງຄວາມຈິງຈະຖືກໂຈມຕີ. ເປັນໄປບໍ່ໄດ້ທີ່ຈະຫຼີກໜີຈາກຄຳເຍາะเย้ย, ການຫຼອກລວງ ແລະ ຄຳສອນອັນເປັນພິດຂອງຄວາມບໍ່ເຊື່ອໃນຍຸກໃໝ່. ຊາຕານປັບວິທີລໍ້ລວງໃຫ້ເໝາะสົมກັບຄົນທຸກປะเพด; ມັນເຂົ້າຫາຄົນທີ່ຂາດການສຶກສາດ້ວຍການເຍาะเย้ยຢຽดยาม ແລະ ເຂົ້າຫາຄົນທີ່ມີການສຶກສາ ດ້ວຍຂໍ້ໂຕ້ແຍ້ງທາງວິທะยาสาด ແລະ ການໃຫ້ເຫດຜົນທາງປັດຊะยา. ທັງສອງວິທີນີ້ລ້ວນແຕ່ມີຈຸດປะสົງ ເພື່ອกะตุ้นໃຫ້ເກີດຄວາມສົງໄສ ແລະ ການດູຖູກພຣະຄຳຂອງພຣະເຈົ້າ. ແມ່ນแต่ชาวหนุ่มที่มีประสบการณ์น้อยกำยังก้าสะเหมิข้อสงไสกง่วกับหลักการพื้นฐานของสาสะหนาคริส. เถิงแม่นว่าความบ่เชื่อของชาวหนุ่มเหล่านี้จะบ่ได้เลิกเซ่ง, แต่มันกำยังมีอิดทิพิน. หลายคนจึ่งเล่มเยาะเย้ยความเชื่อของบันพะบุลุดของตน และ หมิ่นปะหมาดพระวินยานแห่งพระคุน (เบิ่ง เฮับเธิ 10:29). หลายคนที่ควนถวายกงดแด่พระเจ้า และ เป็นพอนใช้แก่เพื่อนมะนุด กับถือกะความบ่เชื่อเฮ็ดใช้ชีวิดบ่เป็นปะโยยด. ทุกคนที่ไว้ใจในการตัดสินใจอันอวดอ่างทะนงตัวของมะนุด และ คิดว่าตนสามาดอะทิบายข้อลี้ลับของพระเจ้า และ ค้นพบความจิงได้ โดยบ่ต้องอาไสพระปันยาของพระอง, คนเซ่นนี้ล้วนแต่กำลังติดกับดักของซาตาน. *{GC 600.2}*

ພວກເຮົາມີຊີວິດຢູ່ໃນຍຸກສະໄໝທີ່ສຳຄັນທີ່ສຸດໃນປะหวัดสาดโลก; ชะตากำของมะนุดสะโลกาใก้จะถือกตัดสินแล้ว. ຄວາມຜາสุกในอะนาคัดของพวกเราเอง และ ความลอดพ้นของ

ຄົນອື່ນແມ່ນຂຶ້ນກັບແນວທາງຂອງພວກເຮົາໃນປັດຈຸບັນ. ພວກເຮົາຈຳເປັນຕ້ອງໄດ້ຮັບການນຳພາໂດຍ ພຣະວິນຍານແຫ່ງຄວາມຈິງ. ຜູ້ຕິດຕາມພຣະຄຣິສທຸກຄົນຄວນທູນຖາມດ້ວຍຄວາມຈິງໃຈວ່າ: “ພຣະອົງ ເຈົ້າເອີຍ ພຣະອົງປະສົງຈະໃຫ້ຂ້ານ້ອຍເຮັດປະການໃດແດ່?” (ກິດຈະການ 9:6 ດັດແປງຈາກ ສະບັບ TKJV). ພວກເຮົາຕ້ອງຖ່ອມໃຈລົງຕໍ່ພຣະພັກພຣະອົງດ້ວຍການອົດອາຫານອະທິຖານ, ພ້ອມທັງ ໃຊ້ເວລາໄຕ່ຕອງເຖິງພຣະຄຳຂອງພຣະອົງ ໂດຍສະເພາະສ່ວນທີ່ກ່ຽວຂ້ອງກັບການພິພາກສາ. ພວກເຮົາ ຄວນສະແຫວງຫາປະສົບການອັນເລິກເຊິ່ງກັບພຣະເຈົ້າ. ທຸກວິນາທີມີຄ່າຫຼາຍ; ເຫດການສຳຄັນກຳລັງ ເກີດຂຶ້ນອ້ອມຮອບພວກເຮົາ; ພວກເຮົາຢູ່ໃນດິນແດນທີ່ຊາຕານວາງກັບດັກໄວ້. ທະຫານຍາມຂອງ ພຣະເຈົ້າເອີຍ, ຢ່າຫຼັບໄຫຼເລີຍ, ສັດຕູກຳລັງລໍຖ້າຢູ່ໃກ້ໆ ພ້ອມທີ່ຈະໂຈມຕີ ແລະ ຈັບເອົາພວກເຈົ້າ ເປັນເຫຍື່ອໃນເວລາທີ່ພວກເຈົ້າງ່ວງເຫງົາຫາວນອນ ແລະ ຢຸດການເຝົ້າລະວັງ. *{GC 601.1}*

ຫຼາຍຄົນຫຼົງເຂົ້າໃຈຜິດກ່ຽວກັບສະພາບອັນແທ້ຈິງຂອງຕົນໃນສາຍພຣະເນດຂອງພຣະເຈົ້າ. ພວກເຂົາ ພູມໃຈທີ່ຕົນບໍ່ໄດ້ເຮັດຄວາມຜິດບາງຢ່າງ ແຕ່ພັດລືມນັບເອົາການດີ ແລະ ວຽກງານອັນມີກຽດທີ່ພຣະເຈົ້າ ຊົງຮຽກຮ້ອງໃຫ້ພວກເຂົາເຮັດ, ແຕ່ພວກເຂົາກັບລະເລີຍບໍ່ເຮັດ. ການທີ່ພວກເຂົາເປັນດັ່ງຕົ້ນໄມ້ໃນສວນ ຂອງພຣະເຈົ້ານັ້ນບໍ່ພໍ ເພາະພຣະເຈົ້າຊົງປາຖະໜາໃຫ້ພວກເຂົາເກີດຜົນ. ພຣະເຈົ້າໄດ້ປະທານພຣະຄຸນ ອັນຊົງຣິດ ເພື່ອໃຫ້ພວກເຂົາເຮັດການດີຫຼາຍຢ່າງ. ດັ່ງນັ້ນ, ພຣະອົງຈະໃຫ້ພວກເຂົາຮັບຜິດຊອບຕໍ່ ຄວາມດີທັງຫຼາຍທີ່ບໍ່ໄດ້ເຮັດ. ໃນໜັງສືບັນທຶກແຫ່ງສະຫວັນມີການຈົດໄວ້ວ່າ ພວກເຂົາເປັນຕົ້ນໄມ້ທີ່ ກິນເນື້ອທີ່ລ້ຳໆ. ເຖິງຢ່າງໃດກໍຕາມ, ຄົນປະເພດນີ້ກໍຍັງບໍ່ເຖິງຂັ້ນສິ້ນຫວັງ; ພຣະເຈົ້າຍັງຊົງວິງວອນ ດ້ວຍຄວາມຮັກ ແລະ ຄວາມອົດທົນຢ່າງຊ້ານານ ຕໍ່ຄົນທັງຫຼາຍທີ່ເມີນເສີຍຕໍ່ພຣະເມດຕາຂອງ ພຣະອົງ ແລະ ໃຊ້ພຣະຄຸນຂອງພຣະອົງຢ່າງຜິດໆ ໂດຍຊົງກ່າວວ່າ: “ດ້ວຍເຫດນີ້ ຈຶ່ງມີຄຳກ່າວ ວ່າ: ‘ຄົນທີ່ຫຼັບເອີຍ, ຈົ່ງຕື່ນຂຶ້ນ, ຈົ່ງຟື້ນຄືນມາຈາກຄວາມຕາຍ ແລະ ພຣະຄຣິສເຈົ້າຈະສ່ອງ ສະຫວ່າງໃສ່ເຈົ້າ.’ ດັ່ງນັ້ນ, ພວກເຈົ້າທັງຫຼາຍຈົ່ງລະວັງໃນການດຳເນີນຊີວິດໃຫ້ດີ . . . ຈົ່ງຮູ້ຈັກໃຊ້ທຸກ ໂອກາດ ເພາະເວລານີ້ເປັນຍຸກຊົ່ວຮ້າຍ.” (ເອເຟໂຊ 5:14–16 LCV). *{GC 601.2}*

ເວລາແຫ່ງການທົດສອບ

ເມື່ອເວລາແຫ່ງການທົດສອບມາເຖິງ, ຜູ້ທີ່ຍຶດເອົາພຣະຄຳຂອງພຣະເຈົ້າເປັນແນວທາງໃນການ ດຳລົງຊີວິດຈະປາກົດໃຫ້ເຫັນ. ໃນລະດູຮ້ອນ, ຕົ້ນໄມ້ຊຽວຕະຫຼອດປີກັບຕົ້ນໄມ້ທົ່ວໄປເບິ່ງບໍ່ອອກວ່າ ມີຄວາມແຕກຕ່າງກັນ; ແຕ່ເມື່ອລົມໜາວພັດມາ, ຕົ້ນໄມ້ຊຽວຕະຫຼອດປີກໍຍັງຄົງສະພາບເດີມ, ໃນ ຂະນະທີ່ຕົ້ນໄມ້ອື່ນໆໃບລ່ວງຫຼົ່ນຈົນໝົດ. ເຊັ່ນດຽວກັນ, ຜູ້ທີ່ອ້າງຕົນເປັນຄຣິສຕຽນແຕ່ມີໃຈບໍ່ສັດຊື່ ອາດເບິ່ງບໍ່ຕ່າງຈາກຄຣິສຕຽນແທ້ໃນຕອນນີ້, ແຕ່ເວລາໃກ້ຈະມາເຖິງແລ້ວທີ່ຄວາມແຕກຕ່າງນັ້ນຈະ ປາກົດໃຫ້ເຫັນຢ່າງຈະແຈ້ງ. ເມື່ອການຕໍ່ຕ້ານປະທຸຂຶ້ນ, ເມື່ອສັງຄົມຖືກຄອບງຳດ້ວຍອະຄະຕິທີ່ຕໍ່ຕ້ານ ສາສະໜາ ແລະ ການກົດຂີ່ຂົ່ມເຫັງເກີດຂຶ້ນອີກ, ຄົນທີ່ເຊື່ອແບບເຄິ່ງໆກາງໆ ແລະ ຄົນໜ້າຊື່ໃຈຄົດ ຈະຫວັ່ນໄຫວ ແລະ ປະຖິ້ມຄວາມເຊື່ອ; ແຕ່ຄຣິສຕຽນແທ້ຈະຢືນຢ່າງໝັ້ນຄົງດັ່ງສິລາ; ຄວາມ ເຊື່ອຂອງພວກເຂົາຈະເຂັ້ມແຂງຂຶ້ນ, ຄວາມຫວັງຈະເຈີດຈ້າຂຶ້ນຍິ່ງກວ່າຕອນທີ່ພວກເຂົາຢູ່ຢ່າງສຸກ ສະບາຍ. *{GC 602.1}*

ຜູ້ປະພັນເພງສັນລະເສີນຂຽນໄວ້ວ່າ: “ຂ້ານ້ອຍຄຶດຕຶກຕອງຂໍ້ບັນຍັດທັງຫຼາຍແຫ່ງພຣະອົງ.” “ຂ້ານ້ອຍ ມີປັນຍາໄດ້ກໍຍ້ອນກົດບັນຍັດຂອງພຣະອົງ; ດັ່ງນັ້ນ, ຂ້ານ້ອຍຈຶ່ງກຽດຊັງການກະທຳຊົ່ວທຸກ ຢ່າງ.” (ເພງສັນລະເສີນ 119:99 ສະບັບລາວບູຮານ; 119:104). *{GC 602.2}*

“ຄວາມສຸກເປັນຂອງຜູ້ທີ່ໄດ້ພົບປັນຍາ.” “ພວກເຂົາເປັນດັ່ງຕົ້ນໄມ້ທີ່ເກີດໃກ້ແຄມລຳທານ ຢັ່ງຮາກລົງດູດນ້ຳຕາມລຳທານນັ້ນ. ພວກເຂົາຈະບໍ່ຢ້ານເມື່ອອາກາດຮ້ອນພັດຜ່ານມາ ເພາະໃບກໍດົກ ແລະ ຂຽວຢູ່ເລື້ອຍໆ; ມັນຈະບໍ່ເດືອດຮ້ອນເມື່ອບໍ່ມີຝົນຕົກ ຈະສືບຕໍ່ເກີດດອກອອກຜົນຢູ່ຢ່າງນັ້ນ.” (ສຸພາສິດ 3:13; ເຢເຣມີຢາ 17:8). *{GC 602.3}*

38

ການເຕືອນຄັ້ງສຸດທ້າຍ

ປະກາດການຫຼົ້ມຈົມຂອງບາບີໂລນ

“ຫຼັງຈາກນັ້ນແລ້ວ ຂ້າພະເຈົ້າໄດ້ເຫັນເທວະດາອີກຕົນໜຶ່ງລົງມາຈາກສະຫວັນ ມີສິດອຳນາດອັນຍິ່ງໃຫຍ່ ແລະ ຣັດສະໝີຂອງເພິ່ນກໍສ່ອງແຈ້ງທົ່ວແຜ່ນດິນໂລກ. ເທວະດານັ້ນໄດ້ຮ້ອງປະກາດສຽງແຮງກ້າຂຶ້ນວ່າ, ‘ບາບີໂລນມະຫານະຄອນຫຼົ້ມຈົມແລ້ວ ຫຼົ້ມຈົມເສຍແລ້ວ. ມັນກາຍເປັນບ່ອນອາໄສຂອງພວກຜີມານຮ້າຍ ເປັນບ່ອນລີ້ຊ່ອນຂອງວິນຍານຊົ່ວຮ້າຍທຸກຢ່າງ ແລະ ເປັນຄອນນົກບໍ່ສະອາດ ແລະ ໜ້າກຽດໜ້າຊັງທຸກຊະນິດ.’” “ແລ້ວຂ້າພະເຈົ້າກໍໄດ້ຍິນສຽງໜຶ່ງອີກຈາກສະຫວັນກ່າວວ່າ, ‘ໄພ່ພົນຂອງເຮົາເອີຍ, ຈົ່ງອອກມາຈາກມະຫານະຄອນນັ້ນເສຍ ເພື່ອເຈົ້າທັງຫຼາຍຈະບໍ່ມີສ່ວນໃນການບາບຂອງມັນ ເພື່ອເຈົ້າຈະບໍ່ໄດ້ຖືກໄພອັນຕະລາຍທີ່ຈະເກີດແກ່ມັນນັ້ນ.’” (ພຣະນິມິດ 18:1, 2, 4). *{GC 603.1}*

ຄຳພະຍາກອນນີ້ຊີ້ໄປເຖິງເວລາທີ່ຈະມີການປະກາດຊ້ຳອີກເຖິງການຫຼົ້ມຈົມຂອງບາບີໂລນ ຕາມທີ່ທູດສະຫວັນອົງທີສອງໃນພຣະທຳພຣະນິມິດ 14:8 ໄດ້ກ່າວໄວ້. ການປະກາດຄັ້ງນີ້ ຈະເພີ່ມເຕີມເລື່ອງຄວາມເສື່ອມເສຍ ທີ່ໄດ້ແຊກຊຶມເຂົ້າໄປໃນອົງການຕ່າງໆ ທີ່ປະກອບກັນເປັນບາບີໂລນ ນັບຕັ້ງແຕ່ຂ່າວນັ້ນຖືກປະກາດຄັ້ງທຳອິດໃນລະດູຮ້ອນປີ 1844. ຄຳພະຍາກອນນີ້ໝາຍເຖິງສະພາບອັນໜ້າຢ້ານກົວຂອງວົງການສາສະໜາ. ທຸກຄັ້ງທີ່ມີການປະຕິເສດຄວາມຈິງ ຈິດໃຈຂອງຜູ້ຄົນກໍຍິ່ງມືດມົນລົງ ແລະ ໃຈຂອງພວກເຂົາກໍຍິ່ງແຂງກະດ້າງຂຶ້ນ ຈົນພວກເຂົາກາຍເປັນຄົນທີ່ບໍ່ເຊື່ອໃນພຣະເຈົ້າແບບຝັງໃຈ. ເຖິງແມ່ນພຣະເຈົ້າຊົງເຕືອນໄວ້ແລ້ວ ແຕ່ພວກເຂົາຈະທ້າທາຍພຣະອົງ ໂດຍການສືບຕໍ່ຢຽບຢ້ຳຂໍ້ໜຶ່ງໃນພຣະບັນຍັດສິບປະການ ຈົນໃນທີ່ສຸດພວກເຂົາຈະຂົ່ມເຫັງຜູ້ທີ່ຖືວ່າພຣະບັນຍັດນັ້ນສັກສິດ. ການໝິ່ນປະໝາດພຣະຄຳ ແລະ ໄພ່ພົນຂອງພຣະອົງກໍເທົ່າກັບເປັນການໝິ່ນປະໝາດພຣະຄຣິສນັ້ນເອງ. ເມື່ອຄຣິສຕະຈັກຕ່າງໆຍອມຮັບຄຳສອນຂອງເລື່ອງການຕິດຕໍ່ກັບວິນຍານ ສິ່ງທີ່ຢັບຢັ້ງທຳມະຊາດບາບຂອງມະນຸດກໍຈະຖືກປົດອອກ ແລະ ຈະມີຄົນອ້າງຄວາມເປັນຄຣິສຕຽນເພື່ອປິດບັງຄວາມບາບທີ່ຕ່ຳຊ້າທີ່ສຸດ. ຄວາມເຊື່ອໃນເລື່ອງຜີວິນຍານເປັນສິ່ງທີ່ເປີດປະຕູສູ່ຄຳສອນ ແລະ ການຫຼອກລວງຂອງພວກມານຊາຕານ, ສົ່ງຜົນໃຫ້ອິດທິພົນຂອງວິນຍານຊົ່ວແຜ່ຂະຫຍາຍໃນຄຣິສຕະຈັກຕ່າງໆ. *{GC 603.2}*

ໃນຄຳພະຍາກອນດັ່ງກ່າວ ຍັງໄດ້ມີການບັນລະຍາຍກ່ຽວກັບບາບີໂລນວ່າ: “ການບາບຂອງນະຄອນນັ້ນ ກອງສູງຂຶ້ນພຽງຟ້າແລ້ວ ແລະ ພຣະເຈົ້າໄດ້ຊົງຈື່ຈຳການກະທຳອັນຊົ່ວຊ້າຂອງມັນໄວ້ແລ້ວ.” (ພຣະນິມິດ 18:5). ບາບີໂລນໄດ້ເຮັດບາບຈົນເຕັມຂີດແລ້ວ ແລະ ຄວາມພິນາດກຳລັງຈະເກີດຂຶ້ນກັບນະຄອນນີ້. ເຖິງຢ່າງໃດກໍຕາມ, ພຣະເຈົ້າຍັງມີໄພ່ພົນຂອງພຣະອົງຢູ່ໃນບາບີໂລນ. ດັ່ງນັ້ນ, ກ່ອນທີ່ພຣະອົງຈະລົງໂທດນະຄອນນັ້ນ, ຜູ້ທີ່ສັດຊື່ເຫຼົ່ານີ້ ຈະຕ້ອງໄດ້ຮັບການຮຽກເອີ້ນໃຫ້ອອກມາເສຍ

ກ່ອນ ເພື່ອພວກເຂົາຈະບໍ່ມີສ່ວນໃນຄວາມບາບຂອງມັນ ແລະ “ເພື່ອເຈົ້າຈະບໍ່ໄດ້ຖືກໄພອັນຕະລາຍ ທີ່ຈະເກີດແກ່ມັນນັ້ນ.” ດ້ວຍເຫດນີ້, ຈຶ່ງມີຂະບວນການປະກາດ ທີ່ສະແດງຜ່ານສັນຍະລັກຂອງ ທູດສະຫວັນທີ່ລົງມາເຮັດໃຫ້ແຜ່ນດິນໂລກສະຫວ່າງດ້ວຍຣັດສະໝີພາບຂອງຕົນ ແລະ ຮ້ອງປະກາດ ດ້ວຍສຽງດັງເຖິງຄວາມບາບຂອງບາບີໂລນ. ມີສຽງຮ້ອງເຊື້ອເຊີນພ້ອມກັບຂ່າວນັ້ນວ່າ: “ໄພ່ພົນຂອງເຮົາ ເອີຍ, ຈົ່ງອອກມາຈາກມະຫານະຄອນນັ້ນເສຍ.” (ພຣະນິມິດ 18:4). ຄຳປະກາດເຫຼົ່ານີ້ຮວມກັບຂ່າວ ຂອງທູດສະຫວັນອົງທີສາມ ເປັນຄຳເຕືອນສຸດທ້າຍທີ່ຈະໃຫ້ແກ່ມະນຸດສະໂລກ. {GC 604.1}

ມະນຸດກຳລັງຈະປະເຊີນກັບການຕັດສິນໃຈທີ່ໜັກໜ່ວງທີ່ສຸດ. ບັນດາອຳນາດການປົກຄອງຂອງ ໂລກ ຈະຮ່ວມມືກັນຕໍ່ສູ້ພຣະບັນຍັດຂອງພຣະເຈົ້າ ແລະ ຈະອອກຄຳສັ່ງໃຫ້ “ຄົນທັງໝົດ ທັງນ້ອຍ ແລະ ໃຫຍ່ ທັງຮັ່ງມີ ແລະ ຍາກຈົນ ທັງເສລີ ແລະ ຂ້ອຍຂ້າ” ປະຕິບັດຕາມຂໍ້ກຳນົດຂອງຄຣິສຕະຈັກ ໂດຍ ການຖືຮັກສາວັນສະບາໂຕທຽມເທັດ (ພຣະນິມິດ 13:16). ທຸກຄົນທີ່ປະຕິເສດບໍ່ຍອມເຊື່ອຟັງ ຈະຖືກ ລົງໂທດທາງກົດໝາຍ; ແລະໃນທີ່ສຸດຈະມີການປະກາດວ່າ ຄົນເຫຼົ່ານັ້ນສົມຄວນຖືກປະຫານຊີວິດ. ໃນ ທາງກົງກັນຂ້າມ, ພຣະບັນຍັດຂອງພຣະເຈົ້າສັ່ງໃຫ້ຖືຮັກສາວັນຢຸດພັກທີ່ພຣະຜູ້ສ້າງຊົງກຳນົດໄວ້ ແລະ ເຕືອນວ່າຜູ້ໃດລະເມີດພຣະບັນຍັດນັ້ນ ຈະຕ້ອງປະເຊີນກັບພຣະພິໂຣດຂອງພຣະອົງ. {GC 604.2}

ເມື່ອທາງເລືອກນີ້ປາກົດຢ່າງຈະແຈ້ງແລ້ວ, ຜູ້ໃດຢຽບຢ່ຳພຣະບັນຍັດຂອງພຣະເຈົ້າ ເພື່ອເຮັດຕາມ ກົດໝາຍຂອງມະນຸດຈະໄດ້ຮັບເຄື່ອງໝາຍຂອງສັດຮ້າຍ. ເພາະວ່າຜູ້ນັ້ນໄດ້ຍອມຮັບເອົາສັນຍະລັກແຫ່ງ ຄວາມຈົງຮັກພັກດີຕໍ່ອຳນາດທີ່ເຂົາເລືອກເຊື່ອຟັງແທນພຣະເຈົ້າ. ມີຄຳຕັກເຕືອນຈາກສະຫວັນວ່າ: “ຖ້າ ຜູ້ໃດບູຊາສັດຮ້າຍ ແລະ ຮູບຂອງມັນ ແລະ ຮັບເຄື່ອງໝາຍນັ້ນໄວ້ທີ່ໜ້າຜາກ ຫຼື ທີ່ມື, ຜູ້ນັ້ນຈະຕ້ອງ ດື່ມເຫຼົ້າແວງແຫ່ງຄວາມໂກດຮ້າຍຂອງພຣະເຈົ້າ ທີ່ຊົງຖອກລົງໃນຈອກແຫ່ງຄວາມໂກດຮ້າຍນັ້ນ ໂດຍບໍ່ ປົນກັບສິ່ງໃດ.” (ພຣະນິມິດ 14:9, 10). {GC 604.3}

ຢ່າງໃດກໍຕາມ, ພຣະພິໂຣດຂອງພຣະເຈົ້າຈະບໍ່ຕົກສູ່ຜູ້ໃດ ນອກເສຍຈາກເຂົາຈະໄດ້ຮັບຮູ້ເຖິງຄວາມ ຈິງ ແລະ ຄວາມຖືກຕ້ອງ ແຕ່ປະຕິເສດມັນໄປ. ມີຫຼາຍຄົນທີ່ບໍ່ເຄີຍມີໂອກາດໄດ້ຍິນຄວາມຈິງທີ່ມີ ຄວາມໝາຍພິເສດສຳລັບຍຸກນີ້ເລີຍ ແລະ ບໍ່ເຄີຍຮັບຮູ້ຢ່າງແທ້ຈິງເຖິງໜ້າທີ່ຂອງການຮັກສາພຣະບັນຍັດ ຂໍ້ທີສີ່. ພຣະເຈົ້າຜູ້ຊົງຮູ້ຈັກຈິດໃຈຂອງມະນຸດທຸກຄົນ ແລະ ຊົງທົດສອບແຮງຈູງໃຈທຸກຢ່າງ ຈະບໍ່ປ່ອຍ ໃຫ້ຜູ້ທີ່ປາຖະໜາຢາກຮູ້ຄວາມຈິງ ຖືກຫຼອກລວງກ່ຽວກັບປະເດັນສຳຄັນຂອງການຂັດແຍ້ງນີ້. ຄຳສັ່ງໃຫ້ ຮັກສາວັນອາທິດຈະບໍ່ຖືກບັງຄັບໃຊ້ກັບປະຊາຊົນ ໂດຍທີ່ພວກເຂົາບໍ່ໄດ້ມີໂອກາດຮູ້ຄວາມຈິງ. ທຸກຄົນ ຈະຕ້ອງໄດ້ຮັບຄວາມສະຫວ່າງພຽງພໍ ເພື່ອຈະຕັດສິນໃຈຢ່າງມີສະຕິ. {GC 605.1}

ທົດສອບຄວາມຈົງຮັກພັກດີ

ໃນເວລານັ້ນ, ສິ່ງທີ່ຈະທົດສອບຄວາມຈົງຮັກພັກດີ ກໍຄືທ່າທີຂອງແຕ່ລະຄົນຕໍ່ວັນສະບາໂຕ, ເພາະ ມັນເປັນປະເດັນຄວາມຈິງທີ່ມີການຕໍ່ຕ້ານຫຼາຍທີ່ສຸດ. ເມື່ອມະນຸດສະໂລກຖືກທົດສອບເປັນຄັ້ງສຸດທ້າຍ ຈະປາກົດຢ່າງຈະແຈ້ງວ່າ ຜູ້ໃດຮັບໃຊ້ພຣະເຈົ້າ ແລະ ຜູ້ໃດບໍ່ຮັບໃຊ້ພຣະອົງ. ໃນເວລານັ້ນ, ການຖື ຮັກສາວັນສະບາໂຕປອມຕາມກົດໝາຍຂອງລັດ ເຊິ່ງຂັດກັບພຣະບັນຍັດຂໍ້ທີສີ່ນັ້ນຈະເປັນການສະແດງ ຄວາມຈົງຮັກພັກດີຕໍ່ອຳນາດທີ່ຕໍ່ຕ້ານພຣະເຈົ້າ. ໃນຂະນະດຽວກັນ, ການຖືຮັກສາວັນສະບາໂຕທີ່ ແທ້ຈິງ ດ້ວຍການປະຕິບັດຕາມພຣະບັນຍັດຂອງພຣະອົງ ກໍເປັນຫຼັກຖານຂອງຄວາມຈົງຮັກພັກດີຕໍ່ ພຣະຜູ້ສ້າງ. ຄົນກຸ່ມໜຶ່ງຍອມຮັບສັນຍະລັກແຫ່ງການຍອມຈຳນົນຕໍ່ອຳນາດຝ່າຍໂລກ ຈຶ່ງຮັບເອົາ ເຄື່ອງໝາຍຂອງສັດຮ້າຍ. ສ່ວນອີກກຸ່ມໜຶ່ງ ເລືອກເອົາສັນຍະລັກແຫ່ງຄວາມຈົງຮັກພັກດີຕໍ່ສິດອຳນາດ ຂອງພຣະເຈົ້າ ຈຶ່ງຮັບເອົາຕາປະທັບຂອງພຣະອົງ. {GC 605.2}

ກ່ອນໜ້ານັ້ນ, ຜູ້ທີ່ປະກາດຄວາມຈິງເລື່ອງຂ່າວທູດສະຫວັນອົງທີສາມ ມັກຖືກເບິ່ງວ່າເປັນກະຕ່າຍຕື່ນຕູມ. ຄຳພະຍາກອນຂອງພວກເຂົາທີ່ວ່າ ສະຫະລັດອາເມຣິກາຈະກາຍເປັນປະເທດທີ່ບໍ່ຍອມຮັບເສລີພາບທາງສາສະໜາ ແລະ ອຳນາດລັດກັບຄຣິສຕະຈັກຈະຮ່ວມມືກັນຂົ່ມເຫັງຜູ້ທີ່ຖືຮັກສາພຣະບັນຍັດຂອງພຣະເຈົ້ານັ້ນ ຖືກຕີຕາວ່າເປັນເລື່ອງເຫຼວໄຫຼທີ່ບໍ່ມີມູນຄວາມຈິງ. ຄົນກໍພາກັນຢືນຢັນວ່າອາເມຣິກາຈະບໍ່ມີວັນປ່ຽນແປງຈາກສິ່ງທີ່ເຄີຍເປັນມາ ຄືຈະບໍ່ມີວັນປະຖິ້ມການປົກປ້ອງເສລີພາບທາງສາສະໜາ. ແຕ່ເມື່ອປະເດັນການບັງຄັບໃຫ້ຖືວັນອາທິດ ໄດ້ຮັບການຖົກຖຽງກັນຢ່າງກວ້າງຂວາງ, ເຫດການທີ່ຄົນເຄີຍສົງໄສ ແລະ ບໍ່ຍອມເຊື່ອມາເປັນເວລາດົນນານນັ້ນກໍປາກົດວ່າໃກ້ເຂົ້າມາ ເຮັດໃຫ້ການປະກາດຂ່າວຂອງທູດສະຫວັນອົງທີສາມເກີດຜົນຢ່າງທີ່ບໍ່ເຄີຍເປັນມາກ່ອນ. {GC 605.3}

ໃນທຸກຍຸກທຸກສະໄໝ, ພຣະເຈົ້າຊົງສົ່ງຜູ້ຮັບໃຊ້ຂອງພຣະອົງມາຕັກເຕືອນເລື່ອງຄວາມບາບທີ່ມີຢູ່ໃນໂລກ ແລະ ໃນຄຣິສຕະຈັກ. ເຖິງຢ່າງໃດກໍຕາມ, ຜູ້ຄົນຢາກຟັງແຕ່ຖ້ອຍຄຳທີ່ນຸ້ມນວນ ແລະ ບໍ່ຍອມຮັບເອົາຄວາມຈິງອັນບໍຣິສຸດທີ່ບໍ່ມີການແຕ່ງເຕີມ. ນັກປະຕິຮູບຫຼາຍຄົນເມື່ອເລີ່ມວຽກງານກໍຕັ້ງໃຈທີ່ຈະໃຊ້ຄວາມລະມັດລະວັງເປັນພິເສດ ໃນການຕໍ່ຕ້ານຄວາມບາບໃນຄຣິສຕະຈັກ ແລະ ໃນປະເທດຂອງຕົນ. ພວກເຂົາຫວັງວ່າແບບຢ່າງຂອງການດຳລົງຊີວິດຢ່າງບໍຣິສຸດ ຈະນຳພາຜູ້ຄົນກັບຄືນມາຫາຄຳສອນໃນພຣະຄຳພີ. ແຕ່ພຣະວິນຍານຂອງພຣະເຈົ້າຊົງດົນບັນດານໃຈພວກເຂົາ ເໝືອນດັ່ງຄັ້ງທີ່ພຣະອົງຊົງດົນໃຈເອລີຢາໃຫ້ຕຳໜິກະສັດຜູ້ຊົ່ວຮ້າຍ ແລະ ປະຊາຊົນທີ່ປະຖິ້ມຄວາມເຊື່ອ. ພວກເຂົາບໍ່ສາມາດຢັບຢັ້ງຕົນເອງຈາກການປະກາດຖ້ອຍຄຳທີ່ຈະແຈ້ງຈາກພຣະຄຳພີ; ແມ່ນແຕ່ຄຳສອນທີ່ພວກເຂົາເຄີຍບໍ່ກ້າເວົ້າກໍໄດ້ເວົ້າອອກມາ. ພຣະເຈົ້າຊົງກະຕຸ້ນພວກເຂົາໃຫ້ປະກາດຄວາມຈິງຢ່າງກະຕືລືລົ້ນ ແລະ ເຕືອນຜູ້ຄົນໃຫ້ລະວັງອັນຕະລາຍ. ພວກເຂົາປະກາດຖ້ອຍຄຳທີ່ພຣະຜູ້ເປັນເຈົ້າປະທານໃຫ້ ໂດຍບໍ່ຢ້ານຜົນທີ່ຈະຕາມມາ, ຈົນປະຊາຊົນຕ້ອງຟັງຄຳຕັກເຕືອນນັ້ນ. {GC 606.1}

ດ້ວຍເຫດນີ້, ຂ່າວຂອງທູດສະຫວັນອົງທີສາມຈະຖືກປະກາດອອກໄປ. ເມື່ອເຖິງເວລາປະກາດຂ່າວນີ້ດ້ວຍຣິດເດດອັນຍິ່ງໃຫຍ່, ພຣະເຈົ້າຈະຊົງເຮັດວຽກຜ່ານຄົນທີ່ຖ່ອມຕົວ ແລະ ຈະຊົງນຳພາຈິດໃຈຂອງຜູ້ທີ່ອຸທິດຖວາຍຕົນເພື່ອຮັບໃຊ້ພຣະອົງ. ຄຸນນະສົມບັດຂອງຜູ້ປະກາດເຫຼົ່ານີ້ ຈະມາຈາກການຖືກເຈີມດ້ວຍພຣະວິນຍານບໍຣິສຸດ ຫຼາຍກວ່າຈາກການສຶກສາຮ່ຳຮຽນໃນສະຖາບັນການສຶກສາ. ພຣະວິນຍານຈະຊົງກະຕຸ້ນຜູ້ທີ່ມີຄວາມເຊື່ອ ແລະ ອຸທິດຕົນໃນການອະທິຖານໃຫ້ອອກໄປດ້ວຍຄວາມກະຕືລືລົ້ນ ແລະ ປ່າວປະກາດພຣະຄຳທີ່ພຣະເຈົ້າປະທານໃຫ້. ຄວາມບາບຂອງບາບີໂລນຈະຖືກເປີດໂປງ; ປະຊາຊົນຈະເຫັນຢ່າງຈະແຈ້ງ ເຖິງຜົນຮ້າຍອັນໜ້າຢ້ານຂອງການໃຊ້ອຳນາດລັດບັງຄັບໃຫ້ປະຕິບັດຕາມຂໍ້ກຳນົດຂອງຄຣິສຕະຈັກ, ການແຜ່ຂະຫຍາຍຂອງລັດທິຕິດຕໍ່ກັບວິນຍານ ແລະ ການເຕີບໃຫຍ່ຂະຫຍາຍຕົວຢ່າງໄວວາ ແລະ ລັບໆ ຂອງລະບອບສັນຕະປາປາ. ຄົນທັງຫຼາຍຈະຕື່ນຕົວ ເມື່ອໄດ້ຍິນຄຳຕັກເຕືອນອັນເຄັ່ງຂຶມເຫຼົ່ານີ້. ຄົນຈຳນວນຫຼວງຫຼາຍຈະພາກັນຟັງຂ່າວສານ ເຊິ່ງບໍ່ເຄີຍໄດ້ຍິນມາກ່ອນ. ພວກເຂົາຈະປະຫຼາດໃຈເມື່ອໄດ້ຍິນວ່າ ບາບີໂລນໝາຍເຖິງຄຣິສຕະຈັກທີ່ໄດ້ຫຼົ້ມຈົມຍ້ອນຄວາມຜິດບາບ ແລະ ການປະຕິເສດຄວາມຈິງທີ່ພຣະເຈົ້າສົ່ງມາຈາກສະຫວັນ. ເມື່ອຜູ້ຄົນໄປຫາອາຈານເກົ່າ ແລະ ຕັ້ງຄຳຖາມດ້ວຍຄວາມຢາກຮູ້ຢ່າງແຮງກ້າວ່າ, “ເລື່ອງເຫຼົ່ານີ້ເປັນຈິງບໍ?” ພວກອາຈານກໍເລົ່າເລື່ອງນິຍາຍ ແລະ ເວົ້າແຕ່ສິ່ງທີ່ມ່ວນຫູ ເພື່ອລະງັບຄວາມຢ້ານກົວ ແລະ ສະຫງົບຈິດສຳນຶກທີ່ຖືກປຸກໃຫ້ຕື່ນ. ແຕ່ຫຼາຍຄົນຖືວ່າຄຳເວົ້າຂອງມະນຸດບໍ່ພຽງພໍ ຈຶ່ງຂໍຫຼັກຖານຈາກພຣະຄຳພີ. ເມື່ອອາຈານທີ່ມີຊື່ສຽງເຫັນວ່າ ມີຄົນບໍ່ຟັງຄຳຊີ້ແຈງຂອງຕົນ ພວກເຂົາກໍຈະເກີດຄວາມຄຽດແຄ້ນຄືກັນກັບພວກຟາຣີຊາຍໃນສະໄໝກ່ອນ ແລະຈະກ່າວຫາຂ່າວສານນີ້ວ່າມາຈາກຊາຕານ ທັງຈະຍຸຍົງຜູ້ທີ່ຮັກການເຮັດບາບໃຫ້ຂົ່ມເຫັງຜູ້ປະກາດຂ່າວນັ້ນ. {GC 606.2}

ໃນຂະນະທີ່ຄວາມຂັດແຍ້ງເລື່ອງວັນສະບາໂຕຂະຫຍາຍເຂົ້າສູ່ພື້ນທີ່ໃໝ່ ແລະ ມີການປະກາດໃຫ້ຄົນທັງຫຼາຍເອົາໃຈໃສ່ພຣະບັນຍັດຂອງພຣະເຈົ້າທີ່ຖືກຢຽບຢໍ່ານັ້ນ, ຊາຕານກໍຈະເຄື່ອນໄຫວຢ່າງເຕັມທີ່. ຣິດອຳນາດທີ່ມາພ້ອມກັບຂ່າວສານນີ້ ມີແຕ່ຈະເຮັດໃຫ້ຜູ້ທີ່ຕໍ່ຕ້ານຍິ່ງມີຄວາມຄຽດແຄ້ນຫຼາຍຂຶ້ນ. ພວກສາສະໜາຈານຈະພະຍາຍາມສຸດຄວາມສາມາດ ເພື່ອປິດກັ້ນແສງສະຫວ່າງບໍ່ໃຫ້ສ່ອງເຖິງຝູງແກະຂອງຕົນ. ພວກເຂົາຈະໃຊ້ທຸກວິທີທາງເທົ່າທີ່ເຮັດໄດ້ ເພື່ອລະງັບການສົນທະນາກ່ຽວກັບປະເດັນສຳຄັນເຫຼົ່ານີ້. ຄຣິສຕະຈັກຈະຮ້ອງຂໍຄວາມຊ່ວຍເຫຼືອຈາກອຳນາດການປົກຄອງ, ເຊິ່ງໃນວົງການນີ້ທັງກາໂຕລິກ ແລະ ໂປຣແຕັສຕັງກໍຈະຮ່ວມໄມ້ຮ່ວມມືກັນ. ເມື່ອຂະບວນການບັງຄັບໃຫ້ຖືວັນອາທິດນັບມື້ຍິ່ງມີຄວາມກ້າຫານເດັດດ່ຽວຂຶ້ນ, ຈະມີການບັງຄັບໃຊ້ກົດໝາຍຕໍ່ຕ້ານຜູ້ທີ່ຖືຮັກສາພຣະບັນຍັດ. ພວກເຂົາຈະຖືກຂົ່ມຂູ່ວ່າ ຖ້າບໍ່ເຊື່ອຟັງກໍຈະຖືກປັບໃໝ ແລະ ຈຳຄຸກ. ບາງຄົນຈະຖືກລໍ້ລວງດ້ວຍຕຳແໜ່ງສູງ, ລາງວັນ ແລະ ຜົນປະໂຫຍດຕ່າງ ໆ ເພື່ອໃຫ້ປະຖິ້ມຄວາມເຊື່ອ. ແຕ່ພວກເຂົາຈະຕອບຢ່າງໜັກແໜ້ນໝັ້ນຄົງວ່າ: “ຈົ່ງຊີ້ຄວາມຜິດຂອງພວກເຮົາຈາກພຣະຄຳຂອງພຣະເຈົ້າ;” ເຊິ່ງເປັນຄຳຮ້ອງຂໍແບບດຽວກັບທີ່ລູເທີເຄີຍກ່າວໄວ້ໃນສະຖານະການທີ່ຄ້າຍຄືກັນ. ຜູ້ທີ່ຖືກນຳຂຶ້ນສານຈະຢືນຢັດປົກປ້ອງຄວາມຈິງ; ແລະບາງຄົນທີ່ໄດ້ຍິນກໍຈະຕັດສິນໃຈຖືຮັກສາພຣະບັນຍັດທັງໝົດຂອງພຣະເຈົ້າ. ດ້ວຍເຫດນີ້, ແສງແຫ່ງຄວາມຈິງຈຶ່ງຈະສ່ອງໄປເຖິງຄົນຈຳນວນຫຼວງຫຼາຍທີ່ບໍ່ເຄີຍມີໂອກາດຮູ້ຈັກມາກ່ອນ. {GC 607.1}

ຜູ້ທີ່ປະຕິບັດຕາມພຣະຄຳຂອງພຣະເຈົ້າດ້ວຍຄວາມຈິງໃຈ ຈະຖືກກ່າວຫາວ່າເປັນພວກກະບົດ. ພໍ່ແມ່ທີ່ບໍ່ເຊື່ອຈະຖືກຊາຕານຄອບງຳຈິດໃຈໃຫ້ມືດບອດ ຈົນພວກເຂົາຈະປະຕິບັດຕໍ່ລູກທີ່ເຊື່ອຢ່າງໂຫດຮ້າຍ ແລະ ເຂັ້ມງວດ; ສ່ວນເຈົ້ານາຍທີ່ບໍ່ເຊື່ອຈະກົດຂີ່ຄົນງານທີ່ຖືຮັກສາພຣະບັນຍັດ. ຄວາມຮັກຈະເຢັນລົງ, ລູກຫຼານຈະຖືກຕັດສິດຈາກມໍລະດົກ ແລະ ຖືກໄລ່ອອກຈາກເຮືອນ. ຄຳເວົ້າຂອງອາຈານໂປໂລຈະສຳເລັດຕາມຕົວອັກສອນທີ່ວ່າ: “ຜູ້ໃດກໍຕາມທີ່ປາຖະໜາຈະດຳເນີນຊີວິດຕາມທາງຂອງພຣະເຈົ້າໃນພຣະຄຣິສເຈົ້າເຢຊູນັ້ນ ກໍຈະຖືກຂົ່ມເຫັງ.” (2 ຕີໂມທຽວ 3:12 LCV). ເມື່ອຜູ້ປົກປ້ອງຄວາມຈິງປະຕິເສດທີ່ຈະນັບຖືວັນອາທິດເປັນວັນສະບາໂຕ, ບາງຄົນຈະຖືກຈັບເຂົ້າຄຸກ, ບາງຄົນຈະຖືກເນລະເທດ ແລະ ບາງຄົນຈະຖືກປະຕິບັດເໝືອນຂ້າທາດ. ສຳລັບສະຕິປັນຍາຂອງມະນຸດແລ້ວ ສິ່ງເຫຼົ່ານີ້ເບິ່ງຄືວ່າເປັນໄປບໍ່ໄດ້, ແຕ່ຈະມີເຫດການແປກປະຫຼາດເກີດຂຶ້ນ ເມື່ອພຣະວິນຍານຂອງພຣະເຈົ້າທີ່ຄອຍຢັບຢັ້ງຢູ່ນັ້ນ ຖືກຖອນອອກຈາກມະນຸດ ແລະ ພວກເຂົາຢູ່ພາຍໃຕ້ການຄວບຄຸມຂອງຊາຕານ ຜູ້ທີ່ກຽດຊັງພຣະບັນຍັດຂອງພຣະເຈົ້າ. ໃຈມະນຸດຈະໂຫດຮ້າຍທາລຸນແທ້ ຖ້າບໍ່ມີຄວາມຮັກຂອງພຣະເຈົ້າ ຫຼື ຄວາມຢຳເກງໃນພຣະອົງ. {GC 608.1}

ສັດຊື່ແມ່ນວ່າຄົນສ່ວນຫຼາຍປະຖິ້ມຄວາມເຊື່ອ

ເມື່ອພະຍຸນັ້ນກຳລັງໃກ້ເຂົ້າມາ, ຄົນຈຳນວນຫຼາຍທີ່ເຄີຍອ້າງວ່າ ເຊື່ອໃນຂ່າວຂອງທູດສະຫວັນອົງທີສາມ ແຕ່ບໍ່ໄດ້ຮັບການຊຳລະໃຫ້ບໍຣິສຸດໂດຍການເຊື່ອຟັງຄວາມຈິງ ກໍຈະປະຖິ້ມຈຸດຢືນຂອງຕົນ ແລະ ເຂົ້າຮ່ວມກັບຝ່າຍຕໍ່ຕ້ານ. ພວກເຂົາໄດ້ຮ່ວມກັບຊາວໂລກ ແລະ ມີແນວຄິດແບບຊາວໂລກ ຈຶ່ງເຮັດໃຫ້ພວກເຂົາມີທັດສະນະຄ້າຍຄືກັບຊາວໂລກໃນເກືອບທຸກເລື່ອງ. ເມື່ອເວລາແຫ່ງການທົດສອບມາເຖິງ, ພວກເຂົາກໍພ້ອມທີ່ຈະເລືອກທາງທີ່ງ່າຍ ແລະ ເປັນທີ່ນິຍົມຂອງຄົນສ່ວນໃຫຍ່. ຄົນທີ່ມີພອນສະຫວັນໃນການເວົ້າຈາ ແລະ ເຄີຍຊົມຊື່ນຍິນດີໃນຄວາມຈິງ ກໍຈະໃຊ້ຄວາມສາມາດຂອງຕົນເພື່ອຫຼອກລວງ ແລະ ຊັກຈູງຄົນໃຫ້ຫຼົງທາງ. ພວກເຂົາຈະກາຍເປັນສັດຕູທີ່ຮ້າຍກາດທີ່ສຸດຕໍ່ພີ່ນ້ອງ

ເກົ່າ. ເມື່ອຜູ້ຖືຮັກສາວັນສະບາໂຕຖືກນຳໄປຂຶ້ນສານ ເພື່ອຕອບຄຳຖາມກ່ຽວກັບຄວາມເຊື່ອຂອງຕົນ, ຄົນເຫຼົ່ານີ້ທີ່ປະຖິ້ມຄວາມເຊື່ອກໍຈະເປັນເຄື່ອງມືທີ່ມີປະສິດທິພາບທີ່ສຸດຂອງຊາຕານ ໃນການບິດເບືອນຄວາມຈິງ ແລະ ກ່າວຫາຜູ້ທີ່ສັດຊື່. ພວກເຂົາຈະໃຫ້ການເທັດ ແລະ ຈະໃສ່ຮ້າຍປ້າຍສີ ເພື່ອຍຸຍົງຝ່າຍອຳນາດການປົກຄອງໃຫ້ຕໍ່ຕ້ານຄົນທີ່ຮັກສາວັນສະບາໂຕ. {GC 608.2}

ໃນເວລາແຫ່ງການກົດຂີ່ຂົ່ມເຫັງນີ້ ຄວາມເຊື່ອຂອງຜູ້ຮັບໃຊ້ຂອງພຣະເຈົ້າຈະຖືກທົດສອບ. ພວກເຂົາໄດ້ຕັກເຕືອນຢ່າງສັດຊື່ ໂດຍເພິ່ງພາແຕ່ພຣະເຈົ້າ ແລະ ພຣະຄຳຂອງພຣະອົງເທົ່ານັ້ນ. ພຣະວິນຍານຂອງພຣະເຈົ້າຊົງດົນໃຈພວກເຂົາໃຫ້ປະກາດ. ພຣະວິນຍານບໍຣິສຸດຊົງຂັບເຄື່ອນພວກເຂົາ ດ້ວຍຄວາມກະຕືລືລົ້ນອັນບໍຣິສຸດ ແລະ ແຮງກ້າ, ພວກເຂົາຈຶ່ງເລີ່ມປະຕິບັດໜ້າທີ່ ໂດຍບໍ່ໄດ້ຄິດຄຳນວນເຖິງຜົນທີ່ຈະຕາມມາຈາກການນຳເອົາພຣະຄຳຂອງພຣະເຈົ້າໄປປະກາດແກ່ປະຊາຊົນ. ພວກເຂົາບໍ່ໄດ້ຄຳນຶງເຖິງເລື່ອງຜົນປະໂຫຍດ ຫຼື ພະຍາຍາມຮັກສາຊື່ສຽງ ຫຼື ຊີວິດຂອງຕົນ. ແຕ່ເມື່ອພະຍຸແຫ່ງການຕໍ່ຕ້ານ ແລະ ການປະນາມຕິຕຽນພັດໂຈມຕີໃສ່ພວກເຂົາ, ບາງຄົນເຖິງກັບຕົກຕະລຶງ ຈົນແທບຈະຮ້ອງອອກມາວ່າ: “ຖ້າພວກເຮົາຮູ້ເຖິງຜົນທີ່ຈະຕາມມາຈາກການປະກາດນັ້ນ, ພວກເຮົາກໍຄົງຈະມິດງຽບໄວ້.” ຄວາມຫຍຸ້ງຍາກອ້ອມຮອບພວກເຂົາແປດດ້ານ ແລະ ຊາຕານກໍໂຈມຕີພວກເຂົາດ້ວຍການລໍ້ລວງຢ່າງຮ້າຍແຮງ. ວຽກງານປະກາດທີ່ພວກເຂົາລົງມືເຮັດນັ້ນ ເບິ່ງຄືວ່າຈະເກີນກຳລັງຂອງພວກເຂົາຫຼາຍ. ຄົນສັດຊື່ເຫຼົ່ານີ້ຖືກຂົ່ມຂູ່ວ່າຈະຖືກທຳລາຍ. ຄວາມກະຕືລືລົ້ນທີ່ເຄີຍມີກໍຫາຍໄປ; ເຖິງຢ່າງໃດກໍຕາມ, ພວກເຂົາກໍບໍ່ສາມາດຖອຍກັບຄືນໄດ້. ແລ້ວເມື່ອຮູ້ສຶກວ່າ ຕົນບໍ່ມີກຳລັງ ຫຼື ຄວາມສາມາດທີ່ຈະເຮັດຫຍັງໄດ້ເລີຍ, ພວກເຂົາກໍໄດ້ເຂົ້າໄປລີ້ໄພໃນພຣະເຈົ້າຜູ້ຊົງຣິດເຂັ້ມແຂງເພື່ອຂໍກຳລັງ. ຜູ້ຮັບໃຊ້ຂອງພຣະອົງລະນຶກໄດ້ວ່າ ຖ້ອຍຄຳທີ່ພວກເຂົາປະກາດນັ້ນບໍ່ແມ່ນຄຳເວົ້າຂອງພວກເຂົາເອງ, ແຕ່ເປັນພຣະຄຳຂອງພຣະເຈົ້າ ຜູ້ຊົງສັ່ງໃຫ້ພວກເຂົາປະກາດຕັກເຕືອນ. ພຣະເຈົ້າຊົງໃສ່ຄວາມຈິງໄວ້ໃນໃຈຂອງບັນດາຜູ້ຮັບໃຊ້ເຫຼົ່ານີ້, ພວກເຂົາຈຶ່ງບໍ່ສາມາດເກັບງຳໄວ້ບໍ່ປະກາດອອກໄປ. {GC 608.3}

ຜູ້ຮັບໃຊ້ຂອງພຣະເຈົ້າໃນອະດີດ ກໍໄດ້ຜ່ານການທົດລອງເຊັ່ນດຽວກັນນີ້. ໄອຼບ, ຮັສ, ລູເທີ, ທິນເດວ, ແບັກສະເຕີ ແລະ ເວສະລີ ໄດ້ຮຽກຮ້ອງໃຫ້ທົດສອບຫຼັກຄຳສອນທຸກຢ່າງດ້ວຍພຣະຄຳພີ ແລະ ປະກາດວ່າພວກເຂົາຈະປະຖິ້ມທຸກສິ່ງທີ່ຂັດກັບພຣະຄຳພີ. ເຖິງວ່າພວກເຂົາຖືກກົດຂີ່ຂົ່ມເຫັງຢ່າງໄຮ້ຄວາມປານີ, ແຕ່ຜູ້ຮັບໃຊ້ເຫຼົ່ານີ້ກໍຍັງສືບຕໍ່ປະກາດຄວາມຈິງ ໂດຍບໍ່ຢຸດບໍ່ເຊົາ. ໃນປະຫວັດສາດຂອງຄຣິສຕະຈັກ, ແຕ່ລະຍຸກສະໄໝມີຄວາມຈິງພິເສດ ທີ່ເໝາະສົມກັບຄວາມຈຳເປັນຂອງໄພ່ພົນຂອງພຣະເຈົ້າໃນເວລານັ້ນ. ທຸກຄັ້ງທີ່ມີການປະກາດຄວາມຈິງໃໝ່ ຄວາມຈິງນັ້ນຈະຖືກງຶດຊັງ ແລະ ຖືກຕໍ່ຕ້ານ; ຜູ້ທີ່ຮັບເອົາຄວາມຈິງນັ້ນກໍຈະຖືກທົດລອງ ແລະ ຖືກທົດສອບຄວາມເຊື່ອ. ພຣະເຈົ້າປະທານຄວາມຈິງພິເສດ ເພື່ອຊ່ວຍໄພ່ພົນຂອງພຣະອົງໃນຍາມວິກິດ. ໃຜຈະກ້າປະຕິເສດບໍ່ປະກາດຄວາມຈິງນັ້ນ? ພຣະອົງຊົງບັນຊາໃຫ້ຜູ້ຮັບໃຊ້ຂອງພຣະອົງປະກາດຄຳເຊື້ອເຊີນແຫ່ງພຣະຄຸນຄັ້ງສຸດທ້າຍໃຫ້ແກ່ຊາວໂລກ. ພວກເຂົາຈະມິດງຽບບໍ່ໄດ້ ເພາະຈະເປັນອັນຕະລາຍຕໍ່ຈິດວິນຍານຂອງພວກເຂົາເອງ. ທູດຂອງພຣະຄຣິສບໍ່ຈຳເປັນຕ້ອງກັງວົນເຖິງຜົນທີ່ຈະເກີດຂຶ້ນ, ພວກເຂົາພຽງແຕ່ເຮັດໜ້າທີ່ຂອງຕົນ ແລະ ມອບຜົນໄວ້ກັບພຣະເຈົ້າ. {GC 609.1}

ກະແສຕໍ່ຕ້ານເພີ່ມທະວີ

ເມື່ອການຕໍ່ຕ້ານທະວີຄວາມຮຸນແຮງຂຶ້ນ, ບັນດາຜູ້ຮັບໃຊ້ຂອງພຣະເຈົ້າກໍຮູ້ສຶກສັບສົນອີກຄັ້ງ ເພາະເບິ່ງຄືວ່າພວກເຂົາເປັນຕົ້ນເຫດຂອງວິກິດນີ້. ເຖິງຢ່າງໃດກໍຕາມ, ທັງຈິດສຳນຶກຂອງຕົນ ແລະ ພຣະຄຳ

ຂອງພຣະເຈົ້າ ລ້ວນແຕ່ຢືນຢັນວ່າແນວທາງຂອງພວກເຂົາຖືກຕ້ອງແລ້ວ. ເຖິງແມ່ນວ່າການທົດລອງຍັງສືບຕໍ່ ແຕ່ພວກເຂົາກໍໄດ້ຮັບກຳລັງທີ່ຈະອົດທົນຕໍ່ສິ່ງເຫຼົ່ານັ້ນ. ການຕໍ່ສູ້ນັບມື້ນັບເຂັ້ມຂຸ້ນ ແລະ ຮຸນແຮງຂຶ້ນ; ແຕ່ຄວາມເຊື່ອ ແລະ ຄວາມກ້າຫານຂອງພວກເຂົາກໍເພີ່ມຂຶ້ນເພື່ອຮັບມືກັບສະພາບການ. ຄຳພະຍານຂອງພວກເຂົາຄື: “ພວກເຮົາບໍ່ກ້າປ່ຽນແປງພຣະຄຳຂອງພຣະເຈົ້າດ້ວຍການແບ່ງແຍກພຣະບັນຍັດອັນສັກສິດຂອງພຣະອົງ. ພວກເຮົາບໍ່ກ້າເອີ້ນພາກສ່ວນໜຶ່ງວ່າສຳຄັນ ແລະ ອີກພາກສ່ວນໜຶ່ງວ່າບໍ່ສຳຄັນ ເພື່ອຈະໄດ້ຮັບຄວາມນິຍົມຊົມຊອບຈາກຊາວໂລກ. ພຣະເຈົ້າຜູ້ທີ່ພວກເຮົາຮັບໃຊ້ຢູ່ນັ້ນ ຊົງສາມາດຊ່ວຍກອບກູ້ພວກເຮົາໄດ້. ພຣະຄຣິສຊົງມີໄຊຊະນະຕໍ່ອຳນາດທັງປວງຂອງໂລກ, ແລ້ວພວກເຮົາຍັງຈະຢ້ານກົວໂລກທີ່ປະລາໄຊຢູ່ບໍ?” *{GC 610.1}*

ການຂົ່ມເຫັງໃນຮູບແບບຕ່າງ ໆ ແມ່ນການສະແດງອອກຂອງຫຼັກການທີ່ຈະມີຢູ່ ຕາບໃດທີ່ຊາຕານຍັງມີຢູ່ ແລະ ຕາບໃດທີ່ຄຣິສຕະສາສະໜາຍັງມີພະລັງຣິດເດດ. ບໍ່ມີຜູ້ໃດສາມາດຮັບໃຊ້ພຣະເຈົ້າໄດ້ ໂດຍບໍ່ຖືກພັກພວກຂອງມານຮ້າຍລຸກຂຶ້ນຕໍ່ຕ້ານ. ພວກວິນຍານຊົ່ວຈະໂຈມຕີລາວ ເພາະມັນຢ້ານວ່າອິດທິພົນຂອງລາວຈະຊິງເອົາເຫຍື່ອໄປຈາກມືຂອງພວກມັນ. ຄົນຊົ່ວທີ່ຖືກຕຳໜິຈາກແບບຢ່າງຊີວິດຂອງລາວຈະຮ່ວມມືກັບພວກວິນຍານຊົ່ວ ເພື່ອລໍ້ລວງລາວໃຫ້ຫ່າງຈາກພຣະເຈົ້າ. ເມື່ອວິທີເຫຼົ່ານີ້ບໍ່ສຳເລັດຜົນ, ພວກມັນກໍຈະໃຊ້ອຳນາດບີບບັງຄັບ ເພື່ອຄວບຄຸມຈິດສຳນຶກ. *{GC 610.2}*

ຕາບໃດທີ່ພຣະເຢຊູຍັງເປັນຜູ້ອ້ອນວອນແທນມະນຸດໃນສະຖານນະມັດສະການເບື້ອງເທິງ, ພຣະ-ວິນຍານບໍຣິສຸດກໍຍັງມີອິດທິພົນຢັ້ງຢືນບັນດາຜູ້ປົກຄອງ ແລະ ປະຊາຊົນ. ພຣະວິນຍານຍັງຄົງຄວບຄຸມກົດໝາຍບ້ານເມືອງໃນລະດັບໜຶ່ງ. ຖ້າບໍ່ມີກົດໝາຍເຫຼົ່ານີ້ ສະພາບຂອງໂລກຄົງຈະເລວຮ້າຍກວ່າທີ່ເປັນຢູ່ໃນປັດຈຸບັນ. ເຖິງແມ່ນວ່າ ຜູ້ປົກຄອງຫຼາຍຄົນເປັນຜູ້ຮັບໃຊ້ທີ່ຫ້າວຫັນຂອງຊາຕານ, ແຕ່ພຣະເຈົ້າກໍຍັງມີຜູ້ຮັບໃຊ້ຂອງພຣະອົງ ຢູ່ທ່າມກາງບັນດາຜູ້ນຳເຫຼົ່ານີ້. ຊາຕານຊັກຈູງຜູ້ຮັບໃຊ້ຂອງມັນ ໃຫ້ສະເໜີມາດຕະການຕ່າງ ໆ ທີ່ຈະກີດກັ້ນຂັດຂວາງວຽກງານຂອງພຣະເຈົ້າ ແຕ່ບັນດານັກການເມືองທີ່ຢຳເກງພຣະເຈົ້າ ໄດ້ຮັບການດົນໃຈຈາກທູດສະຫວັນບໍຣິສຸດໃຫ້ຕໍ່ຕ້ານຂໍ້ສະເໜີດັ່ງກ່າວ ດ້ວຍເຫດຜົນທີ່ບໍ່ມີໃຜສາມາດໂຕ້ຕອບໄດ້. ດ້ວຍເຫດນີ້, ຄົນຈຳນວນໜ້ອຍຈຶ່ງສາມາດສະກັດກັ້ນກະແສຊົ່ວຮ້າຍທີ່ໄຫຼແຮງນັ້ນໄວ້ໄດ້. ການຕໍ່ຕ້ານຂອງສັດຕູແຫ່ງຄວາມຈິງຈະຖືກຢັບຢັ້ງໄວ້ ເພື່ອໃຫ້ຂ່າວຂອງທູດສະຫວັນອົງທີສາມສາມາດຖືກປະກາດອອກໄປ. ເມື່ອການຕັກເຕືອນຄັ້ງສຸດທ້າຍຖືກປະກາດອອກໄປ, ບັນດາຜູ້ນຳທີ່ພຣະເຈົ້າຊົງໃຊ້ກໍຈະໃຫ້ຄວາມສົນໃຈ ແລະ ບາງຄົນກໍຈະຮັບເອົາຄຳເຕືອນນັ້ນ ແລ້ວຈະຢືນຢູ່ຮ່ວມກັບປະຊາກອນຂອງພຣະອົງໃນຊ່ວງເວລາແຫ່ງຄວາມທຸກຍາກລຳບາກຄັ້ງໃຫຍ່. *{GC 610.3}*

ຝົນປາຍລະດູ

ທູດສະຫວັນທີ່ເຂົ້າຮ່ວມໃນການປະກາດຂ່າວຂອງທູດສະຫວັນອົງທີສາມນັ້ນ ຈະເຮັດໃຫ້ແຜ່ນດິນໂລກທັງໝົດສະຫວ່າງດ້ວຍຣັດສະໝີພາບຂອງຕົນ. ຄຳພະຍາກອນໄດ້ບອກເຖິງວຽກງານທີ່ຈະແຜ່ຂະຫຍາຍໄປທົ່ວໂລກ ດ້ວຍຣິດອຳນາດອັນຍິ່ງໃຫຍ່ຢ່າງທີ່ບໍ່ເຄີຍມີມາກ່ອນ. ຂະບວນການປະກາດເລື່ອງການສະເດັດມາຂອງພຣະຄຣິສໃນລະຫວ່າງປີ 1840–1844 ເປັນການສະແດງອອກອັນຮຸ່ງເຮືองເຖິງຣິດອຳນາດຂອງພຣະເຈົ້າ. ຂ່າວຂອງທູດສະຫວັນອົງທຳອິດ ໄດ້ຖືກນຳໄປເຜີຍແຜ່ຢູ່ທຸກສູນປະກາດພຣະກິດຕິຄຸນໃນໂລກ ແລະ ໃນບາງປະເທດມີຄວາມສົນໃຈເລື່ອງສາສະໜາຢ່າງບໍ່ເຄີຍມີມາກ່ອນ ນັບຕັ້ງແຕ່ການປະຕິຮູບຄັ້ງໃຫຍ່ໃນສະຕະວັດທີ 16 ເປັນຕົ້ນມາ. ແຕ່ຂະບວນການທີ່ຈະເກີດຂຶ້ນພາຍໃຕ້ຄຳເຕືอนสุดท้ายของทูดสะหวันอົງທີສາມຈະຍິ່ງໃຫຍ່ກວ່ານັ້ນອີກ. *{GC 611.1}*

ວຽກງານການປະກາດນີ້ ຈະຄ້າຍຄືກັບເຫດການທີ່ເກີດຂຶ້ນໃນວັນເພັນເຕຄໍສະເຕ. ໃນຄາວກ່ອນນັ້ນ ພຣະເຈົ້າປະທານ “ຝົນຕົ້ນລະດູ” ຄືການຖອກເທພຣະວິນຍານບໍຣິສຸດ ເມື່ອເລີ່ມຕົ້ນການປະກາດຂ່າວປະເສີດ ເພື່ອເຮັດໃຫ້ແກ່ນພືດອັນລ້ຳຄ່າງອກງາມຂຶ້ນ. ເຊັ່ນດຽວກັນ, “ຝົນປາຍລະດູ” ກໍຈະຖືກຖອກເທລົງມາ ໃນຊ່ວງສຸດທ້າຍຂອງການປະກາດຂ່າວປະເສີດ ເພື່ອໃຫ້ຮວງເຂົ້າສຸກພ້ອມເກັບກ່ຽວ. “ໃຫ້ເຮົາຍອມຮັບຮູ້ອົງພຣະຜູ້ເປັນເຈົ້າ ໃຫ້ເຮົາບາກບັ່ນຕໍ່ໄປເພື່ອຮູ້ຈັກພຣະອົງ, ຕາບເທົ່າທີ່ດວງຕາເວັນຂຶ້ນຈາກຟ້າສັນໃດ ພຣະອົງຈະຊົງປາກົດພຣະອົງສັນນັ້ນ.” “ພຣະອົງຈະສະເດັດມາຫາເຮົາຄືຝົນ ດັ່ງຝົນປາຍລະດູ ກັບຕົ້ນລະດູ ທີ່ຫົດພື້ນແຜ່ນດິນ” (ໂຮເສອາ 6:3 TNCV/ດັດແປງຈາກສະບັບ TKJV). “ຊາວພູເຂົາຊີໂອນເອີຍ ຈົ່ງຊົມຊື່ນຍິນດີເຖີດ ຈົ່ງຊົມຊື່ນຍິນດີ ສຳລັບສິ່ງທີ່ພຣະເຈົ້າຢາເວ ພຣະເຈົ້າຂອງພວກເຈົ້າໄດ້ກະທຳນັ້ນ; ສຳລັບພວກເຈົ້າ ພຣະອົງເທຝົນລົງຕາມທີ່ພວກເຈົ້າຕ້ອງການ ໃຫ້ຝົນຕົ້ນລະດູ ແລະ ປາຍລະດູຄືແຕ່ກ່ອນ.” (ໂຢເອນ 2:23). “ພຣະເຈົ້າຊົງກ່າວວ່າ, ໃນຍຸກສຸດທ້າຍນັ້ນ ເຮົາຈະຖອກເທພຣະວິນຍານຂອງເຮົາລົງໃສ່ມະນຸດທັງປວງ.” “ແລ້ວກໍຈະເປັນດັ່ງນີ້ ຄືບຸກຄົນໃດທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະໄດ້ລອດພົ້ນ.” (ກິດຈະການ 2:17, 21). *{GC 611.2}*

ວຽກງານ ສຳຄັນ ແຫ່ງ ການ ປະກາດ ຂ່າວປະເສີດ ຈະ ບໍ່ ສິ້ນສຸດ ລົງ ດ້ວຍ ການ ສະແດງ ອອກ ເຖິງ ຣິດອຳນາດຂອງພຣະເຈົ້າໜ້ອຍໄປກວ່າສະໄໝເລີ່ມຕົ້ນການປະກາດ. ຄຳພະຍາກອນທີ່ສຳເລັດໃນການຖອກເທພຣະວິນຍານບໍຣິສຸດໃນຝົນຕົ້ນລະດູ ເມື່ອເລີ່ມຕົ້ນການປະກາດຂ່າວປະເສີດນັ້ນ ຈະສຳເລັດອີກຄັ້ງໜຶ່ງດ້ວຍຝົນປາຍລະດູໃນຕອນສຸດທ້າຍ. ນີ້ແມ່ນ “ວາລະແຫ່ງການຟື້ນໃຈ” ທີ່ອັກຄະສາວົກເປໂຕໄດ້ກ່າວເຖິງເມື່ອເພິ່ນກ່າວວ່າ: “ສະນັ້ນ, ຈົ່ງກັບໃຈໃໝ່ ແລະ ຫັນມາຫາພຣະເຈົ້າ ເພື່ອບາບທັງຫຼາຍຂອງທ່ານຈະຖືກລຶບລ້າງໄປ ແລະ ວາລະແຫ່ງການຟື້ນໃຈຈະມາຈາກອົງພຣະຜູ້ເປັນເຈົ້າ ແລະ ເພື່ອພຣະອົງຈະໄດ້ຊົງສົ່ງພຣະເຢຊູ ຜູ້ທີ່ຊົງແຕ່ງຕັ້ງໄວ້ໃຫ້ເປັນພຣະຄຣິສ ເພື່ອທ່ານທັງຫຼາຍມາ.” (ກິດຈະການ 3:19, 20 TNCV). *{GC 611.3}*

ບັນດາຜູ້ຮັບໃຊ້ຂອງພຣະເຈົ້າທີ່ອຸທິດຕົນ ຈະອອກໄປປະກາດຂ່າວສານຈາກສະຫວັນຕາມບ່ອນຕ່າງ ໆ ຢ່າງຮີບດ່ວນ. ໃບໜ້າຂອງພວກເຂົາເຕັມໄປດ້ວຍແສງສະຫວ່າງ ແລະ ເປັ່ງປະກາຍດ້ວຍຄວາມບໍຣິສຸດ. ສຽງຄົນຈຳນວນຫຼາຍຈະປະກາດເຕືອນດັງກ້ອງໄປທົ່ວແຜ່ນດິນໂລກ. ຈະມີການອັດສະຈັນເກີດຂຶ້ນ, ຄົນເຈັບຈະໄດ້ຮັບການປິ່ນປົວ ແລະ ຈະມີໝາຍສຳຄັນກັບການມະຫັດສະຈັນຢູ່ທ່າມກາງຜູ້ທີ່ເຊື່ອ. ຝ່າຍຊາຕານກໍຈະເຄື່ອນໄຫວເຊັ່ນກັນ ເຖິງກັບເຮັດໃຫ້ໄຟຕົກຈາກຟ້າຕໍ່ໜ້າມະນຸດ ເພື່ອຫຼອກລວງພວກເຂົາ (ເບິ່ງ ພຣະນິມິດ 13:13). ດ້ວຍເຫດນີ້, ມະນຸດສະໂລກຈຶ່ງຈະຕ້ອງເລືອກຢູ່ຝ່າຍໃດຝ່າຍໜຶ່ງ. *{GC 612.1}*

ຂ່າວສານນັ້ນ ສ່ວນຫຼາຍຈະບໍ່ໄດ້ຖືກເຜີຍແຜ່ດ້ວຍການອ້າງເຫດຜົນ ແຕ່ດ້ວຍການສຳນຶກຢ່າງເລິກເຊິ່ງທີ່ມາຈາກພຣະວິນຍານບໍຣິສຸດ. ມີການອະທິບາຍເຫດຜົນຕ່າງ ໆ ຂອງຄວາມຈິງແລ້ວ ແລະ ເມັດພືດກໍໄດ້ຖືກຫວ່ານໄປແລ້ວ; ບັດນີ້, ມັນຈະງອກຂຶ້ນ ແລະ ເກີດຜົນ. ມີຜູ້ຄົນອ່ານສິ່ງຕີພິມທີ່ພວກຜູ້ປະກາດໄດ້ແຈກຢາຍອອກໄປ, ຫຼາຍຄົນທີ່ປະທັບໃຈໃນສິ່ງທີ່ໄດ້ອ່ານນັ້ນ ກໍຍັງບໍ່ສາມາດເຂົ້າໃຈຄວາມຈິງຢ່າງຖ່ອງແທ້ ຫຼື ຖືກຂັດຂວາງບໍ່ໃຫ້ເຊື່ອຟັງຄວາມຈິງ. ບັດນີ້, ແສງສະຫວ່າງໄດ້ສ່ອງແຈ້ງໄປທຸກບ່ອນ ຄວາມຈິງປາກົດໃຫ້ເຫັນຢ່າງຊັດເຈນ ແລ້ວລູກຂອງພຣະເຈົ້າທີ່ຈິງໃຈ ກໍຕັດສາຍສຳພັນທີ່ຜູກມັດພວກເຂົາໄວ້. ສາຍສຳພັນທາງຄອບຄົວ ແລະ ຄວາມຜູກພັນກັບຄຣິສຕະຈັກເກົ່າ ບໍ່ສາມາດໜ່ວງໜ່ຽງພວກເຂົາໄວ້ໄດ້ອີກຕໍ່ໄປ ເພາະຄວາມຈິງມີຄ່າຫຼາຍກວ່າສິ່ງອື່ນໃດທັງໝົດ. ເຖິງແມ່ນວ່າມີການຮ່ວມມືກັນຕໍ່ຕ້ານຄວາມຈິງ, ແຕ່ຄົນຈຳນວນຫຼວງຫຼາຍກໍຍັງເຂົ້າມາຢືນຢູ່ຝ່າຍອົງພຣະຜູ້ເປັນເຈົ້າ. *{GC 612.2}*

ພຣະເຈົ້າຊົງສົ່ງນົກກາໄປລ້ຽງເອລີຢາໃນຍາມອຶດຢາກ ແລະ ພຣະອົງມີ
ຫຼາຍວິທີທີ່ຈະເບິ່ງແຍງຄົນຂອງພຣະອົງໃນຍຸກສຸດທ້າຍເຊັ່ນກັນ.

ເບິ່ງໜ້າ 507.

Image generated with AI (Google Gemini).

39

ເວລາ ແຫ່ງ ຄວາມ ທຸກຍາກລຳບາກ

ໜ້າທີ່ປະໂຣຫິດສຳເລັດແລ້ວ

“ໃນຄັ້ງນັ້ນ ມີຄາເອນ ເຈົ້າຜູ້ພິທັກຍິ່ງໃຫຍ່ ຜູ້ຄຸ້ມກັນຊົນຊາດຂອງເພິ່ນຈະລຸກຂຶ້ນ ແລະ ຈະມີເວລາຍາກລຳບາກຢ່າງບໍ່ເຄີຍມີມາຕັ້ງແຕ່ຄັ້ງມີປະຊາຊາດຈົນເຖິງສະໄໝນັ້ນ ແຕ່ໃນຄັ້ງນັ້ນຊົນຊາດຂອງເພິ່ນຈະຮັບການຊ່ວຍໃຫ້ພົ້ນ ຄືທຸກຄົນທີ່ມີຊື່ບັນທຶກໄວ້ໃນໜັງສື.” (ດານີເອນ 12:1 ດັດແປງຈາກ ສະບັບ TKJV). *{GC 613.1}*

ເມື່ອການປະກາດຂ່າວຂອງທູດສະຫວັນອົງທີສາມສິ້ນສຸດລົງ, ເວລາແຫ່ງພຣະເມດຕາໝົດແລ້ວ ສຳລັບຊາວໂລກທີ່ບໍ່ຍອມກັບໃຈ. ໄພ່ພົນຂອງພຣະເຈົ້າໄດ້ເຮັດພາລະກິດຂອງຕົນສຳເລັດແລ້ວ. ພວກເຂົາໄດ້ຮັບຝົນປາຍລະດູຄື “ວາລະແຫ່ງການຟື້ນໃຈ” ທີ່ມາຈາກອົງພຣະຜູ້ເປັນເຈົ້າ. (ກິດຈະການ 3:19 TNCV). ພວກເຂົາມີຄວາມພ້ອມແລ້ວສຳລັບເວລາແຫ່ງຄວາມຍາກລຳບາກທີ່ກຳລັງຈະມາເຖິງ. ບັນດາ ທູດສະຫວັນກຳລັງອຸ້ນວຽກຢູ່ໃນສະຫວັນ; ມີທູດສະຫວັນອົງໜຶ່ງກັບມາຈາກໂລກປະກາດວ່າ ວຽກງານ ຂອງຕົນສຳເລັດແລ້ວ; ການທົດສອບຄັ້ງສຸດທ້າຍໄດ້ມາເຖິງມະນຸດສະໂລກທຸກຄົນແລ້ວ; ແລະທຸກຄົນ ທີ່ພິສູດຄວາມຈົງຮັກພັກດີຕໍ່ພຣະບັນຍັດ ໄດ້ຮັບຕາປະທັບຂອງພຣະເຈົ້າຜູ້ຊົງພຣະຊົນຢູ່. ໃນເວລາ ນັ້ນ, ພຣະເຢຊູຈະຢຸດການອ້ອນວອນໃນສະຖານນະມັດສະການເບື້ອງເທິງ. ພຣະອົງຊົງຍົກພຣະຫັດ ຂຶ້ນ ແລະ ກ່າວດ້ວຍສຽງດັງວ່າ, “ສຳເລັດແລ້ວ.” ເຫຼົ່າທູດສະຫວັນທັງປວງກໍຖອດມົງກຸດຂອງຕົນ ອອກ ໃນຂະນະທີ່ພຣະອົງຊົງປະກາດຖ້ອຍຄຳອັນເຄັ່ງຂຶມວ່າ: “ຜູ້ທີ່ເຮັດຜິດ ກໍໃຫ້ເຮັດຜິດຕໍ່ໄປ, ຜູ້ ທີ່ຊົ່ວຊ້າ ກໍໃຫ້ຊົ່ວຊ້າຕໍ່ໄປ, ຜູ້ທີ່ເຮັດສິ່ງທີ່ຖືກຕ້ອງ ກໍໃຫ້ເຮັດສິ່ງທີ່ຖືກຕ້ອງຕໍ່ໄປ ແລະ ຜູ້ທີ່ເປັນຄົນ ບໍຣິສຸດ ກໍໃຫ້ເປັນຄົນບໍຣິສຸດຕໍ່ໄປ.” (ພຣະນິມິດ 22:11 LCV). ທຸກຄະດີໄດ້ຖືກຕັດສິນລະຫວ່າງ ຊີວິດ ແລະ ຄວາມຕາຍ. ພຣະຄຣິສໄດ້ຊົງຊຳລະບາບໃຫ້ໄພ່ພົນຂອງພຣະອົງ ແລະ ຊົງລຶບລ້າງຄວາມ ບາບຂອງພວກເຂົາແລ້ວ. ຈຳນວນຜູ້ທີ່ຈະຮັບຄວາມລອດໄດ້ຂີດເສັ້ນຕາຍແລ້ວ; “ອຳນາດ ແລະ ຄວາມ ຍິ່ງໃຫຍ່ຂອງອານາຈັກທັງໝົດໃນແຜ່ນດິນໂລກ”[1] ກຳລັງຈະຖືກມອບໃຫ້ແກ່ຄົນທັງຫຼາຍທີ່ຈະໄດ້ຮັບ ຄວາມລອດເປັນມໍລະດົກ ແລະ ພຣະເຢຊູຈະຊົງຄອບຄອງໃນຖານະຈອມກະສັດ ແລະ ຈອມເຈົ້ານາຍ (ເບິ່ງ ພຣະນິມິດ 19:16). *{GC 613.2}*

ເມື່ອພຣະຄຣິສສະເດັດອອກຈາກສະຖານນະມັດສະການ, ຄວາມມືດຈະປົກຄຸມຊາວໂລກ. ໃນເວລາ ອັນໜ້າຢ້ານກົວນັ້ນ, ຜູ້ຊອບທຳຈະຕ້ອງດຳລົງຊີວິດຢູ່ຕໍ່ພຣະພັກພຣະເຈົ້າຜູ້ບໍຣິສຸດໂດຍບໍ່ມີຜູ້ອ້ອນວອນ ແທນ. ອຳນາດທີ່ເຄີຍຢັບຢັ້ງຄົນຊົ່ວຈະຖືກຍົກເລີກໄປ ແລະ ຊາຕານຈະມີອຳນາດຄອບງຳຜູ້ທີ່ບໍ່ຍອມ

[1] ດານີເອນ 7:27.

ກັບໃຈໃໝ່ ແລະ ຈະຄວບຄຸມພວກເຂົາຢ່າງສົມບູນ. ເວລາແຫ່ງພຣະກະລຸນາຂອງພຣະເຈົ້າສຳລັບມະນຸດໄດ້ສິ້ນສຸດລົງແລ້ວ. ຊາວໂລກໄດ້ປະຕິເສດພຣະເມດຕາຂອງພຣະອົງ, ໝິ່ນປະໝາດຄວາມຮັກຂອງພຣະອົງ ແລະ ຢຽບຢ່ຳພຣະບັນຍັດຂອງພຣະອົງ. ຄົນຊົ່ວໄດ້ກ້າວພົ້ນຂອບເຂດແຫ່ງພຣະກະລຸນາ, ພຣະວິນຍານຂອງພຣະເຈົ້າທີ່ພວກເຂົາປະຕິເສດຢ່າງຕໍ່ເນື່ອງ ຈຶ່ງຖືກຖອນອອກໄປໃນທີ່ສຸດ. ຄົນອະທຳບໍ່ໄດ້ຢູ່ໃຕ້ຮົ່ມພຣະຄຸນ ຈຶ່ງບໍ່ມີສິ່ງໃດປ້ອງກັນພວກເຂົາຈາກມານຮ້າຍ. ໃນຄາວນັ້ນ, ຊາຕານຈະນຳພາຊາວໂລກເຂົ້າສູ່ຄວາມທຸກຍາກລຳບາກຄັ້ງຍິ່ງໃຫຍ່ ເຊິ່ງເປັນເວລາແຫ່ງຄວາມຍາກລຳບາກຄັ້ງສຸດທ້າຍ. ເມື່ອເຫຼົ່າທູດສະຫວັນຂອງພຣະເຈົ້າເຊົາການຢັບຢັ້ງລົມໄວ້ບໍ່ໃຫ້ພັດ ເຊິ່ງໝາຍເຖິງການຢັບຢັ້ງອາລົມ ແລະ ກິເລດຕັນຫາອັນຮຸນແຮງຂອງມະນຸດ, ຄວາມວຸ້ນວາຍຈະເກີດຂຶ້ນຢ່າງເຕັມທີ່. ໂລກທັງໝົດຈະຈົມລົງໃນຄວາມຈິບຫາຍ ທີ່ຮ້າຍແຮງກວ່າທີ່ເຄີຍເກີດຂຶ້ນກັບນະຄອນເຢຣູຊາເລັມໃນອະດີດ. *{GC 614.1}*

ທູດສະຫວັນພຽງອົງດຽວ ໄດ້ທຳລາຍລູກົກທັງໝົດຂອງຊາວເອຢິບ ແລະ ເຮັດໃຫ້ແຜ່ນດິນເຕັມໄປດ້ວຍການໄວ້ທຸກ. ເມື່ອດາວິດເຮັດຜິດຕໍ່ພຣະເຈົ້າ ໂດຍການນັບຈຳນວນປະຊາຊົນ, ທູດສະຫວັນອົງດຽວໄດ້ກໍ່ຄວາມວິບັດຢ່າງຮ້າຍແຮງ ເພື່ອລົງໂທດຄວາມບາບຂອງເພິ່ນ. ເຫຼົ່າທູດສະຫວັນບໍຣິສຸດໄດ້ໃຊ້ອຳນາດທຳລາຍນີ້ ເມື່ອພຣະເຈົ້າຊົງບັນຊາສັນໃດ, ທູດຝ່າຍຊາຕານ ກໍຈະໃຊ້ອຳນາດດຽວກັນ ເມື່ອພຣະອົງຊົງອະນຸຍາດ. ປັດຈຸບັນກອງກຳລັງແຫ່ງຄວາມຊົ່ວຮ້າຍກຽມພ້ອມແລ້ວ ແລະ ກຳລັງລໍຖ້າການອະນຸຍາດຈາກພຣະເຈົ້າເພື່ອນຳຄວາມຫາຍະນະໄປທົ່ວທຸກບ່ອນ. *{GC 614.2}*

ຜູ້ທີ່ໃຫ້ກຽດພຣະບັນຍັດຂອງພຣະເຈົ້າຖືກກ່າວຫາວ່າ ເປັນເຫດໃຫ້ພຣະອົງລົງໂທດມະນຸດສະໂລກ. ພວກເຂົາຈະຖືກກ່າວຫາວ່າ ເປັນສາເຫດຂອງຄວາມປັ່ນປ່ວນອັນຮ້າຍແຮງຂອງທຳມະຊາດ, ຄວາມຂັດແຍ້ງ ແລະ ການຂ້າຟັນກັນທີ່ເຮັດໃຫ້ໂລກເຕັມໄປດ້ວຍຄວາມທຸກລຳບາກ. ອິດອຳນາດທີ່ມາພ້ອມກັບການປະກາດເຕືອນຄັ້ງສຸດທ້າຍ ໄດ້ເຮັດໃຫ້ຄົນຊົ່ວມີຄວາມຄຽດແຄ້ນຕໍ່ທຸກຄົນທີ່ຮັບເອົາຂ່າວສານນັ້ນ. ຊາຕານຈະປຸກປັ່ນໃຫ້ຄວາມກຽດຊັງ ແລະ ການກົດຂີ່ຂົ່ມເຫັງທະວີຄວາມຮຸນແຮງຂຶ້ນ. *{GC 614.3}*

ເມື່ອພຣະເຈົ້າຊົງຖອນໄປຈາກຊົນຊາດຍິວເປັນຄັ້ງສຸດທ້າຍ, ພວກປະໂຣຫິດ ແລະ ປະຊາຊົນກໍບໍ່ຮູ້ເລື່ອງແຕ່ຢ່າງໃດ. ພວກເຂົາຍັງຖືວ່າຕົນເປັນຊົນຊາດທີ່ພຣະເຈົ້າຊົງເລືອກ ເຖິງແມ່ນວ່າພວກເຂົາຢູ່ພາຍໃຕ້ການຄວບຄຸມຂອງຊາຕານ ແລະ ຖືກຊັກຈູງດ້ວຍອາລົມອັນຊົ່ວຮ້າຍທີ່ສຸດກໍຕາມ. ພິທີກຳທັງຫຼາຍໃນພຣະວິຫານຍັງສືບຕໍ່, ພວກເຂົາຍັງຖວາຍເຄື່ອງບູຊາເທິງແທ່ນບູຊາທີ່ເປີເປື້ອນດ້ວຍມົນທິນ ແລະ ອ້ອນວອນຂໍພຣະພອນຈາກພຣະເຈົ້າທຸກມື້ທຸກວັນ ເພື່ອປະຊາຊົນທີ່ມີຄວາມຜິດໃນການຂ້າພຣະບຸດທີ່ຮັກຂອງພຣະເຈົ້າ ແລະ ໃນການພະຍາຍາມຂ້າບັນດາຜູ້ຮັບໃຊ້ ແລະ ອັກຄະສາວົກຂອງພຣະອົງ. ໃນທຳນອງດຽວກັນ, ເມື່ອມີການປະກາດຄຳຕັດສິນທີ່ປ່ຽນແປງບໍ່ໄດ້ໃນສະຖານນະມັດສະການແຫ່ງສະຫວັນ ແລະ ຊະຕາກຳຂອງມະນຸດໄດ້ຖືກຕັດສິນຊີ້ຂາດແລ້ວ, ຊາວໂລກກໍຈະບໍ່ຮູ້ຈັກເລື່ອງນີ້. ຮູບແບບການປະຕິບັດທາງສາສະໜາຈະຍັງຄົງສືບຕໍ່ໄປ ໃນທ່າມກາງຄົນທັງຫຼາຍທີ່ພຣະວິນຍານຂອງພຣະເຈົ້າໄດ້ຈາກພວກເຂົາໄປແລ້ວ. ຊາຕານຈະດົນໃຈພວກເຂົາ ໃຫ້ເຮັດຕາມແຜນການອັນຊົ່ວຮ້າຍຂອງມັນດ້ວຍຄວາມກະຕືລືລົ້ນ ແຕ່ຈະເບິ່ງຄືເປັນຄວາມກະຕືລືລົ້ນເພື່ອພຣະເຈົ້າ. *{GC 615.1}*

ວັນສະບາໂຕຈະກາຍເປັນຈຸດຂັດແຍ້ງສຳຄັນໃນວົງການຄຣິສຕຽນ, ບັນດາຜູ້ນຳສາສະໜາ ແລະ ເຈົ້າໜ້າທີ່ຂອງລັດຈະຮ່ວມມືກັນບັງຄັບໃຫ້ຖືຮັກສາວັນອາທິດ. ການທີ່ຄົນກຸ່ມນ້ອຍບໍ່ຍອມອ່ອນຂໍ້ແຕ່ຢ່າງໃດ ຈະເຮັດໃຫ້ພວກເຂົາຖືກທຸກຄົນດູໝິ່ນ ແລະ ກຽດຊັງ. ຈະມີການກົດດັນໃຫ້ສັງຄົມຍອມຮັບ

ວ່າ ຄົນຈຳນວນໜ້ອຍທີ່ຕໍ່ຕ້ານກົດລະບຽບຂອງຄຣິສຕະຈັກ ແລະ ກົດໝາຍຂອງລັດ ໃນເລື່ອງການຮັກສາວັນອາທິດນັ້ນບໍ່ຄວນຮັບອະນຸຍາດໃຫ້ຢູ່ຕໍ່ໄປ. ການທີ່ຈະໃຫ້ພວກເຂົາທົນທຸກທໍລະມານຈະດີກວ່າການທີ່ປະເທດຊາດທັງຫຼາຍຕ້ອງຕົກຢູ່ໃນຄວາມສັບສົນວຸ້ນວາຍ ແລະ ສະພາບທີ່ບໍ່ມີກົດໝາຍ. ຫຼາຍສະຕະວັດກ່ອນນັ້ນ, ພວກຜູ້ນຳປະຊາຊົນກຳເຄີຍໃຊ້ເຫດຜົນແບບດຽວກັນໃນການຕໍ່ສູ້ພຣະຄຣິສ. ກາຢະຟາເຊິ່ງເປັນຄົນມີເລ່ລ່ຽມກ່າວວ່າ: “ຈະເປັນປະໂຫຍດສຳລັບພວກທ່ານ ທີ່ໃຫ້ຄົນໜຶ່ງຕາຍເພື່ອປະຊາຊົນ ກໍດີກວ່າຈະໃຫ້ຄົນທັງຊາດຕ້ອງຈິບຫາຍ.” (ໂຢຮັນ 11:50 LCV). ຜູ້ຄົນຫຼວງຫຼາຍຈະເຫັນວ່າ ຂໍ້ສະເໜີນີ້ສົມເຫດສົມຜົນ. ໃນທີ່ສຸດ, ຈະມີການອອກຄຳສັ່ງຕໍ່ຕ້ານຜູ້ທີ່ຖືຮັກສາວັນສະບາໂຕຕາມພຣະບັນຍັດຂໍ້ທີສີ່ ແລະ ປະນາມພວກເຂົາວ່າ ເປັນຄົນທີ່ສົມຄວນຖືກລົງໂທດໃຫ້ໜັກທີ່ສຸດ. ເມື່ອຄົບກຳນົດເວລາ, ປະຊາຊົນຈະໄດ້ຮັບອະນຸຍາດໃຫ້ຂ້າພວກເຂົາໄດ້. ລະບອບສັນຕະປາປາໃນເອີຣົບ ແລະ ຄຣິສຕະຈັກໂປຣແຕັສຕັງທີ່ປະຖິ້ມຄວາມເຊື່ອໃນອາເມຣິກາ ຈະປະຕິບັດຕໍ່ຜູ້ທີ່ຖືຮັກສາພຣະບັນຍັດທັງໝົດຂອງພຣະເຈົ້າໃນລັກສະນະແບບດຽວກັນ. *{GC 615.2}*

ເວລາທຸກຍາກຂອງຢາໂຄບ

ໃນເວລານັ້ນ, ໄພ່ພົນຂອງພຣະເຈົ້າຈະເຂົ້າສູ່ຄວາມທຸກຍາກລຳບາກຕ່າງໆ ເຊິ່ງຜູ້ເຜີຍພຣະທຳເຢເຣມີຢາເອີ້ນວ່າ ເປັນຄວາມທຸກຍາກຂອງຢາໂຄບ. “ພຣະເຈົ້າຢາເວກ່າວວ່າ, ‘ເຮົາໄດ້ຍິນສຽງຮ້ອງແຕກຕື່ນຕົກໃຈ ເປັນສຽງຮ້ອງຕົກໃຈກົວ ແລະ ບໍ່ມີຄວາມສະຫງົບສຸກ. . . . ໜ້າຕາທຸກຄົນຊີດຂາວດັ່ງຜູ້ຍິງຄອດລູກ. ວັນອັນໜ້າຢ້ານກົວໃຫຍ່ນັ້ນ ກຳລັງຈະມາເຖິງ ບໍ່ມີວັນໃດເລີຍຈະປຽບປານວັນນັ້ນໄດ້.’” “ເປັນເວລາທຸກໃຈຂອງຢາໂຄບ, ແຕ່ເຂົາກໍຍັງຈະລອດວັນນັ້ນໄປໄດ້.” (ເຢເຣມີຢາ 30:5–6, 7 TKJV). *{GC 616.1}*

ປະສົບການຂອງຢາໂຄບ ເມື່ອເພິ່ນອະທິຖານຕໍ່ສູ້ໃນຄ່ຳຄືນແຫ່ງຄວາມທຸກໃຈ ເພື່ອຂໍການຊ່ວຍກູ້ຈາກມືຂອງເອຊາວ[2] ເປັນສັນຍະລັກເຖິງປະສົບການຂອງໄພ່ພົນຂອງພຣະເຈົ້າ ໃນເວລາແຫ່ງຄວາມທຸກຍາກລຳບາກຄັ້ງຍິ່ງໃຫຍ່ນັ້ນ. ຢາໂຄບໄດ້ຫຼອກລວງໃຫ້ພໍ່ອວຍພອນເພິ່ນແທນເອຊາວ ເຊິ່ງເປັນເຫດໃຫ້ຢາໂຄບຕ້ອງໜີເອົາຊີວິດລອດຈາກອ້າຍຜູ້ຂົ່ມຂູ່ວ່າຈະຂ້າເພິ່ນເສຍ. ຫຼັງຈາກລີ້ໄພຢູ່ຫຼາຍປີ, ພຣະເຈົ້າຊົງສັ່ງໃຫ້ເພິ່ນກັບຄືນປະເທດຂອງຕົນພ້ອມກັບລູກເມຍ ແລະ ຝູງສັດ. ເມື່ອມາຮອດຊາຍແດນ, ເພິ່ນຕົກໃຈຢ້ານກັບຂ່າວທີ່ວ່າ ເອຊາວກຳລັງມາພ້ອມກັບກຸ່ມນັກຮົບ, ເຊິ່ງແນ່ນອນວ່າຈະມາແກ້ແຄ້ນ. ຄົນທີ່ຢູ່ກັບຢາໂຄບບໍ່ມີອາວຸດປ້ອງກັນຕົວ; ເບິ່ງຄືວ່າຈະຕ້ອງຕົກເປັນເຫຍື່ອໃຫ້ຖືກທຳຮ້າຍ ແລະ ຂ້າຕາຍ. ນອກຈາກຄວາມກັງວົນ ແລະ ຄວາມຢ້ານກົວແລ້ວ, ຍັງມີການກ່າວໂທດຕົນເອງອັນເປັນພາລະທີ່ໜັກໜ່ວງ, ເພາະແມ່ນຄວາມບາບຂອງເພິ່ນເອງທີ່ເປັນເຫດໃຫ້ພວກເຂົາຕົກສູ່ອັນຕະລາຍໃນຄັ້ງນີ້. ຄວາມຫວັງດຽວຂອງເພິ່ນ ແມ່ນພຣະເມດຕາຂອງພຣະເຈົ້າ; ມີແນວປ້ອງກັນຕົວພຽງຢ່າງດຽວ ກໍຄືການອະທິຖານ. ເຖິງຢ່າງໃດກໍຕາມ, ເພິ່ນໄດ້ເຮັດທຸກຢ່າງທີ່ຕົນເຮັດໄດ້ ເພື່ອຊົດເຊີຍຄວາມຜິດທີ່ເຮັດຕໍ່ອ້າຍ ແລະ ຫຼີກລ່ຽງອັນຕະລາຍ. ຜູ້ຕິດຕາມພຣະຄຣິສກໍຄວນເຮັດແບບດຽວກັນ; ເມື່ອເຂົ້າໃກ້ເວລາແຫ່ງຄວາມທຸກຍາກລຳບາກ, ພວກເຂົາຄວນພະຍາຍາມທຸກວິທີທາງ ເພື່ອໃຫ້ຄົນທັງຫຼາຍເຂົ້າໃຈພວກເຂົາຢ່າງຖືກຕ້ອງ, ເພື່ອກຳຈັດອະຄະຕິຂອງຜູ້ຄົນ ແລະ ຫຼີກລ່ຽງອັນຕະລາຍທີ່ກຳລັງຈະເກີດຂຶ້ນຕໍ່ເສລີພາບທາງຈິດສຳນຶກ. *{GC 616.2}*

[2] ເບິ່ງ ປະຖົມມະການ 32:24–30.

ຫຼັງຈາກສົ່ງຄອບຄົວໄປແລ້ວ ເພື່ອບໍ່ໃຫ້ພວກເຂົາເຫັນຄວາມທຸກໃຈຂອງຕົນ, ຢາໂຄບຢູ່ຄົນດຽວເພື່ອອ້ອນວອນຕໍ່ພຣະເຈົ້າ. ເພິ່ນສາລະພາບຄວາມບາບ ແລະ ຂອບພຣະຄຸນພຣະເຈົ້າສຳລັບພຣະເມດຕາທີ່ພຣະອົງຊົງມີຕໍ່ເພິ່ນ. ນອກຈາກນັ້ນ, ເພິ່ນຍັງຖ່ອມໃຈລົງຢ່າງສຸດຊຶ້ງ ທູນຂໍໃຫ້ພຣະອົງຊົງລະນຶກເຖິງພັນທະສັນຍາກັບບັນພະບຸລຸດ ແລະ ພຣະສັນຍາທີ່ປະທານໃຫ້ເພິ່ນໃນນິມິດທີ່ເບັດເອນ ແລະ ໃນແຜ່ນດິນທີ່ເພິ່ນລີ້ໄພ. ນີ້ແມ່ນຊ່ວງວິກິດແຫ່ງຊີວິດ, ທຸກສິ່ງຂຶ້ນຢູ່ກັບເຫດການໃນຄັ້ງນີ້. ຢາໂຄບສືບຕໍ່ອະທິຖານຄົນດຽວໃນຄວາມມືດ ດ້ວຍການຖ່ອມໃຈລົງຕໍ່ພຣະເຈົ້າ. ທັນໃດນັ້ນ, ມີມືມາວາງລົງເທິງບ່າຂອງເພິ່ນ. ເພິ່ນຄິດວ່າສັດຕູຈະມາເອົາຊີວິດ ຈຶ່ງປ້ຳສູ້ກັບຜູ້ນັ້ນດ້ວຍສຸດກຳລັງ. ເມື່ອຟ້າເລີ່ມແຈ້ງ ຄົນແປກໜ້າໄດ້ໃຊ້ຣິດເດດເໜືອທຳມະຊາດ ພຽງແຕະຕ້ອງຢາໂຄບເທົ່ານັ້ນ ແລ້ວຊາຍທີ່ແຂງແຮງກໍເປັນຄືຄົນອຳມະພາດ. ເພິ່ນລົ້ມລົງ ບໍ່ມີແຮງສູ້ ແລະ ຮ້ອງໄຫ້ອ້ອນວອນຢູ່ທີ່ຄໍຂອງຄູ່ຕໍ່ສູ້ທີ່ເລີກລັບນັ້ນ. ບັດນີ້ຢາໂຄບຮູ້ແລ້ວວ່າ ຜູ້ທີ່ເພິ່ນປ້ຳສູ້ນຳແມ່ນທູດແຫ່ງພັນທະສັນຍາ. ເຖິງແມ່ນວ່າ ເພິ່ນພິການ ແລະ ເຈັບປວດແສນສາຫັດ ແຕ່ຢາໂຄບບໍ່ຍອມເລີກລົ້ມຄວາມມຸ່ງໝັ້ນຂອງຕົນ. ເພິ່ນໄດ້ຫົນຕໍ່ຄວາມສັບສົນ, ຄວາມເສຍໃຈ ແລະ ບັນຫາທີ່ເກີດຈາກຄວາມບາບຂອງຕົນມາດົນນານ; ບັດນີ້, ເພິ່ນຕ້ອງການແນ່ໃຈວ່າ ຄວາມບາບນັ້ນໄດ້ຮັບການອະໄພແລ້ວ. ທູດແຫ່ງພັນທະສັນຍາ ເບິ່ງຄືກຳລັງຈະຈາກໄປ ແຕ່ຢາໂຄບກອດພຣະອົງໄວ້[3] ແລະ ທູນຂໍພຣະພອນ. ພຣະອົງຊົງກ່າວວ່າ “ປ່ອຍຂ້ອຍແມ ເພາະຕາເວັນຈວນຈະຂຶ້ນແລ້ວ.” ແຕ່ຢາໂຄບຮ້ອງວ່າ “ຂ້ອຍຈະບໍ່ປ່ອຍເຈົ້າໄປ ຈົນກວ່າເຈົ້າຈະອວຍພອນຂ້ອຍ.” (ປະຖົມມະການ 32:26). ຊ່າງເປັນຄວາມເຊື່ອໝັ້ນ, ຄວາມແນ່ວແນ່ ແລະ ຄວາມພາກພຽນທີ່ໜ້າປະທັບໃຈແທ້! ຖ້າການຮຽກຮ້ອງນີ້ເປັນການອວດອ້າງ ຫຼື ການຮຽກຮ້ອງໃນສິ່ງທີ່ຕົນບໍ່ມີສິດຮຽກຮ້ອງ, ຢາໂຄບຄົງຖືກທຳລາຍໃນທັນທີ. ແຕ່ນີ້ແມ່ນຄວາມໝັ້ນໃຈຂອງຄົນທີ່ຍອມຮັບຄວາມອ່ອນແອ ແລະ ຄວາມບໍ່ຄູ່ຄວນຂອງຕົນ ແຕ່ວາງໃຈໃນພຣະເມດຕາຂອງພຣະເຈົ້າ ຜູ້ຊົງຮັກສາພັນທະສັນຍາ. *{GC 616.3}*

“ເຂົາສູ້ກັບທູດສະຫວັນ ແລະ ໄດ້ໄຊຊະນະ” (ໂຮເສອາ 12:4 NTV). ຢາໂຄບເປັນຄົນບາບ ແລະ ມີຄວາມຜິດພາດ, ແຕ່ເພິ່ນມີໄຊຊະນະກັບພຣະເຈົ້າແຫ່ງຟ້າສະຫວັນ ດ້ວຍການຖ່ອມຕົວລົງ, ກັບໃຈໃໝ່ ແລະ ການຍອມຈຳນົນ. ເພິ່ນໄດ້ຍຶດພຣະສັນຍາຂອງພຣະເຈົ້າໄວ້ ດ້ວຍຄວາມເຊື່ອທີ່ສັ່ນໄຫວ; ແລ້ວດ້ວຍຄວາມຮັກທີ່ບໍ່ມີສິ້ນສຸດ ພຣະອົງຈຶ່ງບໍ່ອາດປະຕິເສດຄຳອ້ອນວອນຂອງຄົນບາບຜູ້ນີ້. ເພື່ອເປັນຫຼັກຖານເຖິງໄຊຊະນະ ແລະ ເພື່ອເປັນກຳລັງໃຈໃຫ້ຄົນອື່ນເຮັດຕາມແບບຢ່າງ ພຣະເຈົ້າຊົງປ່ຽນຊື່ຂອງຢາໂຄບ ຈາກຊື່ທີ່ຕອກຢ້ຳເຖິງຄວາມບາບມາເປັນຊື່ທີ່ລະນຶກເຖິງໄຊຊະນະ. ການທີ່ຢາໂຄບມີໄຊຊະນະກັບພຣະເຈົ້ານັ້ນ ເປັນການຢືນຢັນວ່າເພິ່ນຈະສາມາດມີໄຊຊະນະກັບມະນຸດເຊັ່ນກັນ. ເພິ່ນຈຶ່ງບໍ່ຢ້ານຄວາມໂກດແຄ້ນຂອງອ້າຍອີກຕໍ່ໄປ, ເພາະອົງພຣະຜູ້ເປັນເຈົ້າຊົງເປັນຜູ້ປົກປ້ອງເພິ່ນ. *{GC 617.1}*

ຊາຕານໄດ້ກ່າວຫາຢາໂຄບຕໍ່ໜ້າເຫຼົ່າທູດສະຫວັນຂອງພຣະເຈົ້າ ໂດຍອ້າງສິດໃນການທຳລາຍຍ້ອນຄວາມບາບຂອງເພິ່ນ. ມັນໄດ້ຍຸຍົງເອຊາວໃຫ້ຍົກທັບມາໂຈມຕີເພິ່ນ ແລະ ໃນຄືນອັນຍາວນານແຫ່ງການປ້ຳສູ້ຂອງບັນພະບຸລຸດຜູ້ນີ້ ຊາຕານພະຍາຍາມໃຫ້ເພິ່ນຮູ້ສຶກຜິດ ເພື່ອໃຫ້ເພິ່ນທໍ້ຖອຍ ແລະ ບໍ່ຍຶດໝັ້ນໃນພຣະເຈົ້າ. ເຖິງແມ່ນວ່າ ຢາໂຄບເກືອບຈະໝົດຫວັງ ແຕ່ເພິ່ນຮູ້ວ່າຖ້າບໍ່ໄດ້ຮັບການຊ່ວຍເຫຼືອຈາກສະຫວັນ ເພິ່ນຈະຕ້ອງພິນາດຢ່າງແນ່ນອນ. ເພິ່ນໄດ້ກັບໃຈຈາກຄວາມຜິດບາບອັນໃຫຍ່ຫຼວງຂອງຕົນດ້ວຍຄວາມຈິງໃຈ, ແລະໄດ້ອ້ອນວອນຂໍພຣະເມດຕາຈາກພຣະເຈົ້າ. ຢາໂຄບບໍ່ຍອມເລີກລົ້ມຄວາມ

[3] ໃນບົດນີ້ ແລະ ໃນໜັງສືເຫຼັ້ມອື່ນຂອງຜູ້ຂຽນ ມີການອະທິບາຍວ່າ ທູດແຫ່ງພັນທະສັນຍາ ຄືພຣະຄຣິສກ່ອນທີ່ພຣະອົງສະເດັດມາບັງເກີດເປັນມະນຸດ.

ຕັ້ງໃຈ ແຕ່ໄດ້ຈັບທູດແຫ່ງພັນທະສັນຍາໄວ້ແໜ້ນ ແລະ ທູນຂໍດ້ວຍສຽງຮ້ອງທີ່ຈິງຈັງ ແລະ ດ້ວຍ ຄວາມທຸກໃຈ ຈົນເພີ່ນໄດ້ຮັບໄຊຊະນະ. *{GC 618.1}*

ໃນສະໄໝບູຮານ, ຊາຕານໄດ້ກະຕຸ້ນເອຊາວໃຫ້ຍົກທັບໄປຕໍ່ສູ້ກັບຢາໂຄບສັນໃດ, ມັນກໍຈະປຸກລະດົມ ຄົນຊົ່ວໃຫ້ທຳລາຍໄພ່ພົນຂອງພຣະເຈົ້າ ໃນເວລາແຫ່ງຄວາມທຸກຍາກລຳບາກສັນນັ້ນ. ມັນໄດ້ກ່າວຫາ ຢາໂຄບຢ່າງໃດ, ມັນກໍຈະກ່າວຫາໄພ່ພົນຂອງພຣະເຈົ້າຢ່າງນັ້ນ. ຊາຕານຖືວ່າຊາວໂລກເປັນໄພ່ພົນ ຂອງມັນ ແຕ່ຄົນກຸ່ມນ້ອຍທີ່ຮັກສາພຣະບັນຍັດຂອງພຣະເຈົ້າ ກຳລັງຕໍ່ຕ້ານອຳນາດຂອງມັນຢູ່. ຖ້າ ມັນສາມາດທຳລາຍພວກເຂົາໃຫ້ສິ້ນຊາກ, ໄຊຊະນະຂອງມັນກໍຈະສົມບູນ. ຊາຕານສັງເກດວ່າ ເຫຼົ່າ ທູດສະຫວັນບໍຣິສຸດກຳລັງປົກປ້ອງພວກເຂົາຢູ່ ແລະ ມັນຄາດການວ່າຄວາມບາບຂອງພວກເຂົາຄົງໄດ້ ຮັບການອະໄພແລ້ວ, ແຕ່ມັນບໍ່ຮູ້ວ່າຄະດີຂອງພວກເຂົາໄດ້ຖືກຕັດສິນໃນສະຖານນະມັດສະການເບື້ອງ ເທິງແລ້ວ. ມັນຮູ້ດີວ່າຄວາມບາບທີ່ມັນເຄີຍລໍ້ລວງໃຫ້ພວກເຂົາເຮັດນັ້ນມີຫຍັງແດ່, ມັນຈຶ່ງນຳເອົາຄວາມ ບາບເຫຼົ່ານັ້ນ ມາກ່າວຫາພວກເຂົາຕໍ່ພຣະເຈົ້າໃນແງ່ທີ່ຮ້າຍແຮງທີ່ສຸດ. ຊາຕານກ່າວວ່າ ຄົນກຸ່ມນີ້ ສົມຄວນຖືກຕັດອອກຈາກພຣະຄຸນຂອງພຣະເຈົ້າເຊັ່ນດຽວກັບຕົນ. ມັນກ່າວວ່າ ພຣະເຈົ້າບໍ່ສາມາດ ໃຫ້ອະໄພຄວາມບາບຂອງພວກເຂົາດ້ວຍຄວາມຍຸຕິທຳ ໃນຂະນະທີ່ທຳລາຍມັນພ້ອມກັບເຫຼົ່າທູດຂອງ ມັນ. ຊາຕານອ້າງວ່າ ພວກເຂົາເປັນເຫຍື່ອຂອງມັນແລ້ວ ແລະ ຮຽກຮ້ອງໃຫ້ມອບພວກເຂົາໄວ້ໃນ ກຳມື ເພື່ອຈະໄດ້ທຳລາຍ. *{GC 618.2}*

ໃນຂະນະທີ່ຊາຕານກ່າວຫາປະຊາກອນຂອງພຣະເຈົ້າເນື່ອງຈາກຄວາມບາບຂອງພວກເຂົາ, ພຣະ-ຜູ້ເປັນເຈົ້າຊົງຍອມໃຫ້ມັນທົດລອງພວກເຂົາຢ່າງເຕັມທີ່. ຄວາມໄວ້ວາງໃຈໃນພຣະເຈົ້າ, ຄວາມເຊື່ອ ແລະ ຄວາມໝັ້ນຄົງຂອງພວກເຂົາຈະຖືກທົດສອບຢ່າງໜັກ. ເມື່ອຄົນຂອງພຣະເຈົ້າຫວນຄິດເຖິງ ອະດີດ, ຄວາມຫວັງກໍເລີ່ມມອດລົງ ເພາະຕະຫຼອດຊີວິດທີ່ຜ່ານມາ ພວກເຂົາເຫັນຄວາມດີພຽງເລັກນ້ອຍ ເທົ່ານັ້ນ. ເຂົາທັງຫຼາຍຮູ້ດີເຖິງຄວາມອ່ອນແອ ແລະ ຄວາມບໍ່ຄູ່ຄວນຂອງຕົນຢ່າງເລິກເຊິ່ງ. ຊາຕານ ພະຍາຍາມເຮັດໃຫ້ພວກເຂົາຢ້ານກົວວ່າບໍ່ມີຄວາມຫວັງເສຍແລ້ວ ແລະ ຮອຍມົນທິນຂອງພວກເຂົາ ຈະບໍ່ມີວັນຖືກລ້າງອອກໄປໄດ້. ມັນຫວັງທີ່ຈະທຳລາຍຄວາມເຊື່ອ ເພື່ອໃຫ້ພວກເຂົາຍອມຕໍ່ການ ທົດລອງ ແລະ ປະຖິ້ມພຣະເຈົ້າ. *{GC 618.3}*

ຜ່ານຄວາມທຸກນັ້ນຍ້ອນໄດ້ກຽມພ້ອມ

ເຖິງແມ່ນວ່າ ໄພ່ພົນຂອງພຣະເຈົ້າຈະຖືກສັດຕູທີ່ມຸ່ງໝາຍທຳລາຍພວກເຂົາອ້ອມໄວ້ກໍຕາມ, ແຕ່ ຄວາມທຸກໃຈທີ່ປະສົບຢູ່ໃນຂະນະນັ້ນ ບໍ່ແມ່ນຍ້ອນຄວາມຢ້ານກົວທີ່ຈະຖືກຂົ່ມເຫັງເພາະເຫັນແກ່ຄວາມ ຈິງ. ສິ່ງທີ່ພວກເຂົາຢ້ານກົວຄື: ອາດມີຄວາມບາບບາງຢ່າງທີ່ຍັງບໍ່ໄດ້ສາລະພາບ; ພວກເຂົາຢ້ານ ວ່າ ເນື່ອງຈາກຄວາມບົກຜ່ອງໃນຕົວເອງອາດເຮັດໃຫ້ພຣະສັນຍາຂອງພຣະຜູ້ຊ່ວຍໃຫ້ລອດບໍ່ສຳເລັດໃນ ຊີວິດຂອງຕົນ ເຊິ່ງພຣະອົງຊົງສັນຍາວ່າ: “ເຮົາກໍຈະປົກປ້ອງເຈົ້າໃຫ້ພົ້ນຈາກຊົ່ວໂມງແຫ່ງການທົດລອງ ທີ່ກຳລັງມາເຖິງທົ່ວທັງໂລກ.” (ພຣະນິມິດ 3:10 LCV). ຖ້າສາມາດໝັ້ນໃຈໄດ້ວ່າຄວາມບາບໄດ້ຮັບ ການອະໄພແລ້ວ ພວກເຂົາກໍພ້ອມທີ່ຈະປະເຊີນກັບການທໍລະມານ ຫຼື ຄວາມຕາຍ. ແຕ່ຖ້າປາກົດວ່າ ພວກເຂົາບໍ່ຄູ່ຄວນ ແລະ ເສຍຊີວິດຍ້ອນຄວາມບົກຜ່ອງໃນອຸປະນິໄສຂອງຕົນເອງ ກໍຈະເປັນເຫດໃຫ້ ພຣະນາມອັນບໍຣິສຸດຂອງພຣະເຈົ້າຖືກໝິ່ນປະໝາດ. *{GC 619.1}*

ບໍ່ວ່າຈະຫັນໄປທາງໃດ ໄພ່ພົນຂອງພຣະເຈົ້າກໍໄດ້ຍິນສຽງຜູ້ຄົນວາງແຜນການທໍລະຍົດ ແລະ ເຫັນ ການກະບົດທີ່ກຳລັງດຳເນີນຢູ່ຢ່າງແຂງຂັນ; ພວກເຂົາຈຶ່ງເກີດຄວາມປາຖະໜາຢ່າງແຮງກ້າ ໃຫ້ການ ປະຖິ້ມຄວາມເຊື່ອທີ່ແຜ່ລາມນີ້ສິ້ນສຸດລົງ ແລະ ຄວາມຊົ່ວຮ້າຍຂອງຄົນອະທຳຈົບລົງ. ໃນຂະນະທີ່

ໄພ່ພົນຂອງພຣະເຈົ້າອ້ອນວອນ ຂໍໃຫ້ພຣະເຈົ້າຢຸດຢັ້ງການກະທຳຂອງຜູ້ທີ່ກະບົດຕໍ່ພຣະອົງ, ພວກເຂົາຮູ້ສຶກຕຳໜິຕົນເອງຢ່າງສຸດຊຶ້ງທີ່ບໍ່ມີກຳລັງພຽງພໍທີ່ຈະຕ້ານທານ ແລະ ຢັບຢັ້ງກະແສຄວາມຊົ່ວຮ້າຍທີ່ໄຫຼລົ້ນ. ຄົນຂອງພຣະເຈົ້າຮູ້ສຶກວ່າຖ້າເຂົາໄດ້ອຸທິດກຳລັງຄວາມສາມາດທັງໝົດໃນການຮັບໃຊ້ພຣະຄຣິສຕະຫຼອດມາ ແລະ ເຕີບໃຫຍ່ຂຶ້ນໃນຄວາມເຊື່ອເປັນລຳດັບ, ກອງກຳລັງຂອງຊາຕານກໍຈະມີອຳນາດໜ້ອຍລົງໃນການຕໍ່ສູ້ກັບພວກເຂົາ. *{GC 619.2}*

ປະຊາກອນຂອງພຣະເຈົ້າຖ່ອມຕົວລົງຕໍ່ພຣະພັກພຣະອົງ ແລະ ທູນພຣະອົງວ່າ ທີ່ຜ່ານມາ ພວກເຂົາໄດ້ກັບໃຈຈາກຄວາມບາບທີ່ມີຢ່າງຫຼວງຫຼາຍຂອງຕົນແລ້ວ; ຈາກນັ້ນ, ກຳທວນພຣະສັນຍາຂອງພຣະຜູ້ຊ່ວຍໃຫ້ລອດທີ່ກ່າວວ່າ: “ໃຫ້ເຂົາເກາะຢູ່ກັບກຳລັງຂອງເຮົາ ເພື່ອໃຫ້ເຂົາເຮັດສັນຕິພາບກັບເຮົາ ແລ້ວເຂົາຈະເຮັດສັນຕິພາບກັບເຮົາ.” (ເອຊາຢາ 27:5 ດັດແປງຈາກສະບັບ TKJV). ເຖິງແມ່ນວ່າ ຄຳອະທິຖານບໍ່ໄດ້ຮັບຄຳຕອບໃນທັນທີກໍຕາມ, ແຕ່ຄວາມເຊື່ອຂອງພວກເຂົາກໍບໍ່ໄດ້ຫວັ່ນໄຫວ. ຄົນຂອງພຣະເຈົ້າກຳລັງປະສົບກັບຄວາມທຸກໃຈ, ຄວາມຢ້ານກົວ ແລະ ຄວາມລຳບາກຢ່າງສຸດຊຶ້ງ, ແຕ່ພວກເຂົາກໍຍັງສືບຕໍ່ອະທິຖານໂດຍບໍ່ຢຸດບໍ່ເຊົາ ແລະ ຍຶດໝັ້ນໃນຣິດອຳນາດຂອງພຣະເຈົ້າ. ເໝືອນດັ່ງທີ່ຢາໂຄບໄດ້ຈັບທູດແຫ່ງພັນທະສັນຍາໄວ້ແໜ້ນ, ພວກເຂົາກໍຮ້ອງທູນວ່າ: “ຂ້ານ້ອຍຈະບໍ່ໃຫ້ທ່ານໄປ ກ່ອນທ່ານໄດ້ອວຍພອນໃຫ້ຂ້ານ້ອຍ.” (ປະຖົມມະການ 32:26 ສະບັບລາວບູຮານ). *{GC 619.3}*

ຖ້າຢາໂຄບບໍ່ໄດ້ກັບໃຈຈາກຄວາມບາບໃນການຫຼອກເອົາສິດທິລູກກົກ, ພຣະເຈົ້າກໍຄົງບໍ່ຮັບຟັງຄຳອະທິຖານຂອງເພິ່ນ ແລະ ຄົງບໍ່ໄວ້ຊີວິດຂອງເພິ່ນດ້ວຍພຣະເມດຕາ. ໃນເວລາແຫ່ງຄວາມທຸກຍາກລຳບາກນັ້ນກໍເຊັ່ນດຽວກັນ ຖ້າໄພ່ພົນຂອງພຣະເຈົ້າຍັງມີຄວາມບາບທີ່ບໍ່ໄດ້ສາລະພາບ, ຄວາມບາບເຫຼົ່ານັ້ນກໍຈະເຮັດໃຫ້ພວກເຂົາບໍ່ສາມາດທົນຕໍ່ຄວາມຢ້ານກົວ ແລະ ຄວາມທຸກໃຈໄດ້. ຄວາມສິ້ນຫວັງຈະທຳລາຍຄວາມເຊື່ອ ແລະ ພວກເຂົາຈະບໍ່ກ້າອ້ອນວອນຂໍການຊ່ວຍກູ້ຈາກພຣະເຈົ້າ. ແຕ່ເຖິງແມ່ນວ່າພວກເຂົາຈະຮູ້ສຶກຢ່າງເລິກເຊິ່ງວ່າຕົນບໍ່ຄູ່ຄວນ, ພວກເຂົາກໍບໍ່ມີຄວາມຜິດບາບເຊື່ອງຊ່ອນໄວ້ທີ່ຈະຕ້ອງເປີດເຜີຍ. ຄວາມບາບຂອງພວກເຂົາໄດ້ເຂົ້າສູ່ການພິພາກສາໄປລ່ວງໜ້າ ແລະ ຖືກລຶບລ້າງໄປແລ້ວ ຈົນພວກເຂົາບໍ່ສາມາດລະນຶກເຖິງມັນໄດ້ອີກ. *{GC 620.1}*

ຊາຕານຊັກຈູງຫຼາຍຄົນໃຫ້ເຊື່ອວ່າ ພຣະເຈົ້າຈະເບິ່ງຂ້າມຄວາມບໍ່ສັດຊື່ຂອງຕົນໃນເລື່ອງເລັກໆນ້ອຍໆແຫ່ງຊີວິດ. ແຕ່ພຣະອົງຊົງສະແດງໃຫ້ເຫັນຜ່ານການປະຕິບັດຕໍ່ຢາໂຄບວ່າ ບໍ່ວ່າໃນກໍລະນີໃດ ພຣະອົງຈະບໍ່ຍິນຍອມ ຫຼື ເບິ່ງຂ້າມຄວາມຊົ່ວຮ້າຍເລີຍ. ທຸກຄົນທີ່ພະຍາຍາມຫາຂໍ້ແກ້ຕົວ ຫຼື ປົກປິດຄວາມບາບຂອງຕົນ ແລະ ປ່ອຍໃຫ້ມັນຄົງຢູ່ໃນປຶ້ມບັນທຶກແຫ່ງສະຫວັນ ໂດຍບໍ່ຍອມສາລະພາບ ແລະ ບໍ່ໄດ້ຮັບການອະໄພກໍຈະພ່າຍແພ້ຕໍ່ຊາຕານ. ຍິ່ງມີການອວດອ້າງ ແລະ ຕຳແໜ່ງສູງເທົ່າໃດ ການກະທຳຂອງພວກເຂົາກໍຍິ່ງເປັນທີ່ໜ້າລັງກຽດສຳລັບພຣະເຈົ້າເທົ່ານັ້ນ, ແລະໄຊຊະນະຂອງຊາຕານກໍຍິ່ງແນ່ນອນຫຼາຍຂຶ້ນຕາມລຳດັບ. ຜູ້ທີ່ຊັກຊ້າໃນການກຽມພ້ອມສຳລັບວັນຂອງພຣະເຈົ້າ ຈະບໍ່ສາມາດກຽມພ້ອມໄດ້ໃນເວລາແຫ່ງຄວາມທຸກຍາກລຳບາກ ຫຼື ໃນເວລາໃດໆຫຼັງຈາກນັ້ນ. ບໍ່ມີຄວາມຫວັງຫຍັງເລີຍສຳລັບຄົນເຊັ່ນນັ້ນ. *{GC 620.2}*

ຜູ້ທີ່ອ້າງຕົນເປັນຄຣິສຕຽນ ແຕ່ບໍ່ໄດ້ກຽມພ້ອມສຳລັບການຕໍ່ສູ້ຄັ້ງສຸດທ້າຍອັນໜ້າຢ້ານກົວນັ້ນ ກໍຈະສາລະພາບຄວາມບາບດ້ວຍຄວາມສິ້ນຫວັງ ແລະ ດ້ວຍຖ້ອຍຄຳທີ່ເຕັມໄປດ້ວຍຄວາມເຈັບປວດ ໃນຂະນະທີ່ຄົນຊົ່ວພາກັນຊົມຊື່ນຍິນດີຕໍ່ຄວາມທຸກລຳບາກຂອງພວກເຂົາ. ການສາລະພາບບາບແບບນີ້ ກໍຄ້າຍຄືກັບການສາລະພາບຂອງເອຊາວ ແລະ ຢູດາ. ຜູ້ທີ່ສາລະພາບເຊັ່ນນີ້ ເສຍໃຈກັບ*ໝາກຜົນ*ທີ່ເກີດຈາກການລະເມີດພຣະບັນຍັດເທົ່ານັ້ນ ແຕ່ບໍ່ໄດ້ເສຍໃຈກັບຄວາມຜິດບາບຂອງຕົນ. ພວກເຂົາບໍ່ໄດ້ສຳນຶກຜິດຢ່າງແທ້ຈິງ ແລະ ບໍ່ໄດ້ກຽດຊັງຄວາມຊົ່ວຮ້າຍເລີຍ. ພວກເຂົາຍອມຮັບຄວາມບາບຂອງ

ຕົນ ຍ້ອນຢ້ານການລົງໂທດເທົ່ານັ້ນ. ແທ້ຈິງແລ້ວ ພວກເຂົາກໍຄືກັນກັບກະສັດຟາໂຣໃນສະໄໝກ່ອນ ຄື ຖ້າຫາກການພິພາກສາຖືກຍົກເລີກ ພວກເຂົາກໍຈະກັບໄປຕໍ່ຕ້ານສະຫວັນອີກຄືເກົ່າ. *{GC 620.3}*

ປະຫວັດຂອງຢາໂຄບເປັນຫຼັກຖານຢືນຢັນວ່າ ພຣະເຈົ້າຈະບໍ່ປະຖິ້ມຜູ້ທີ່ຖືກຫຼອກລວງ, ຖືກລໍ້ລວງ ແລະ ຖືກທໍລະຍົດຈົນເຮັດບາບ ແຕ່ໄດ້ກັບໃຈມາຫາພຣະອົງດ້ວຍຄວາມຈິງໃຈ. ໃນຂະນະທີ່ຊາຕານ ພະຍາຍາມທຳລາຍຄົນກຸ່ມນີ້, ພຣະເຈົ້າຈະສົ່ງທູດສະຫວັນມາປອບໃຈ ແລະ ປົກປ້ອງພວກເຂົາໃນຍາມ ອັນຕະລາຍ. ຊາຕານມຸ່ງໝັ້ນໂຈມຕີຢ່າງຮຸນແຮງ, ການຫຼອກລວງຂອງມັນໜ້າຢ້ານກົວ, ແຕ່ພຣະເຈົ້າ ຊົງເຝົ້າເບິ່ງໄພ່ພົນຂອງພຣະອົງ ແລະ ຊົງຮັບຟັງສຽງຮ້ອງທູນຂອງພວກເຂົາ. ມີຄວາມທຸກທໍລະມານຢ່າງ ໃຫຍ່ຫຼວງ, ໄຟໃນເຕົາຫຼອມເບິ່ງຄືຈະເຜົາໄໝ້ພວກເຂົາ, ແຕ່ພຣະອົງຜູ້ຊົງຫຼໍ່ຫຼອມນັ້ນ ຈະຊົງນຳໄພ່ພົນ ຂອງພຣະອົງອອກມາເໝືອນດັ່ງທອງຄຳທີ່ຜ່ານການຫຼໍ່ຫຼອມດ້ວຍໄຟ. ຄວາມຮັກຂອງພຣະເຈົ້າທີ່ມີຕໍ່ລູກ ທັງຫຼາຍຂອງພຣະອົງໃນຊ່ວງເວລາແຫ່ງການທົດລອງອັນຮຸນແຮງທີ່ສຸດນັ້ນກໍຍັງເຂັ້ມແຂງ ແລະ ອ່ອນໂຍນ ເໝືອນດັ່ງໃນຍາມທີ່ພວກເຂົາຮຸ່ງເຮືອງທີ່ສຸດ. ແຕ່ຄົນຂອງພຣະອົງຈຳເປັນຕ້ອງຜ່ານເຂົ້າໄປໃນເຕົາ ໄຟ, ຄວາມເປັນຊາວໂລກຂອງພວກເຂົາຕ້ອງຖືກເຜົາໄໝ້ໃຫ້ໝົດໄປ ເພື່ອພາບລັກຂອງພຣະຄຣິສຈະໄດ້ ສະທ້ອນອອກມາຢ່າງສົມບູນ. *{GC 621.1}*

ຄວາມເຊື່ອທີ່ບໍ່ທໍ້ຖອຍ

ໃນຊ່ວງເວລາແຫ່ງຄວາມທຸກຍາກລຳບາກ ແລະ ຄວາມໂສກເສົ້າທີ່ຈະມາເຖິງນັ້ນ ປະຊາກອນຂອງ ພຣະເຈົ້າຈະຕ້ອງມີຄວາມເຊື່ອທີ່ທົນຕໍ່ຄວາມເມື່ອຍລ້າ, ການລໍຖ້າ ແລະ ຄວາມອຶດຫິວ, ເປັນຄວາມເຊື່ອ ທີ່ຈະບໍ່ທໍ້ຖອຍ ເຖິງແມ່ນວ່າຈະຖືກທົດສອບຢ່າງໜັກ. ພຣະເຈົ້າຊົງມອບເວລາແຫ່ງພຣະກະລຸນາ ເພື່ອ ໃຫ້ທຸກຄົນກຽມພ້ອມສຳລັບເວລາແຫ່ງຄວາມທຸກຍາກນັ້ນ. ຢາໂຄບໄດ້ຮັບໄຊຊະນະ ເພາະເພິ່ນຕັ້ງໃຈ ແນ່ວແນ່ ແລະ ມີຄວາມບາກບັ່ນພາກພຽນ. ໄຊຊະນະຂອງເພິ່ນສະແດງໃຫ້ເຫັນເຖິງພະລັງຂອງການ ອະທິຖານທີ່ບໍ່ຍອມເລີກລົ້ມ. ທຸກຄົນທີ່ຍຶດໝັ້ນໃນພຣະສັນຍາຂອງພຣະເຈົ້າເໝືອນດັ່ງຢາໂຄບ ແລະ ມີ ຄວາມຕັ້ງໃຈພາກພຽນເໝືອນດັ່ງເພິ່ນ ກໍຈະປະສົບຜົນສຳເລັດຄືກັນກັບເພິ່ນ. ຜູ້ທີ່ບໍ່ຍອມປະຕິເສດ ຕົນເອງ, ບໍ່ຍອມທູນຂໍພຣະພອນຈາກພຣະເຈົ້າດ້ວຍຄວາມທຸກໃຈ ແລະ ຄວາມຈິງໃຈເປັນເວລາດົນນານ ກໍຈະບໍ່ໄດ້ຮັບພຣະພອນນັ້ນ. ມີໜ້ອຍຄົນທີ່ເຂົ້າໃຈຄຳວ່າ “ການຕໍ່ສູ້ກັບພຣະເຈົ້າ!” ມີໜ້ອຍຄົນທີ່ເຄີຍ ສະແຫວງຫາພຣະເຈົ້າດ້ວຍຄວາມປາຖະໜາອັນແຮງກ້າຈົນໃຊ້ພະລັງທັງໝົດທີ່ມີຢູ່. ເມື່ອຄື້ນແຫ່ງຄວາມ ສິ້ນຫວັງອັນເກີນທີ່ຈະພັນລະນາ ໄດ້ປະທະຜູ້ທີ່ອ້ອນວອນນັ້ນຢ່າງຖ້ວມທົ້ນ, ມີຈັກຄົນທີ່ຈະຍຶດໝັ້ນໃນ ພຣະສັນຍາຂອງພຣະເຈົ້າ ດ້ວຍຄວາມເຊື່ອທີ່ບໍ່ຫວັ່ນໄຫວ. *{GC 621.2}*

ຜູ້ທີ່ມີຄວາມເຊື່ອພຽງເລັກນ້ອຍໃນປັດຈຸບັນ ແມ່ນກຸ່ມຄົນທີ່ມີຄວາມສ່ຽງຫຼາຍທີ່ສຸດທີ່ຈະຫຼົງຕາມ ການຫຼອກລວງຂອງຊາຕານ ແລະ ກົດໝາຍທີ່ບັງຄັບຈິດສຳນຶກ. ເຖິງແມ່ນວ່າ ອາດຈະຜ່ານພົ້ນການ ທົດສອບໄດ້ກໍຕາມ ແຕ່ໃນຊ່ວງເວລາແຫ່ງຄວາມທຸກຍາກລຳບາກ ພວກເຂົາຈະຈົມລົງສູ່ຄວາມທຸກໃຈ ທີ່ໜັກໜ່ວງຍິ່ງແທ້; ເພາະພວກເຂົາບໍ່ເຄີຍຝຶກນິໄສໃນການໄວ້ວາງໃຈພຣະເຈົ້າ. ບົດຮຽນແຫ່ງຄວາມ ເຊື່ອທີ່ພວກເຂົາລະເລີຍມານັ້ນ ຈະຕ້ອງໄດ້ຮຽນພາຍໃຕ້ແຮງກົດດັນອັນໜ້າຢ້ານກົວຂອງຄວາມທໍ້ແທ້ ໃຈ. *{GC 622.1}*

ພວກເຮົາຄວນຮູ້ຈັກພຣະເຈົ້າໃຫ້ດີຂຶ້ນ ດ້ວຍການພິສູດພຣະສັນຍາຂອງພຣະອົງ. ເຫຼົ່າທູດສະຫວັນ ບັນທຶກທຸກຄຳອະທິຖານທີ່ທູນຂໍດ້ວຍຄວາມຮ້ອນຮົນຈາກໃຈຈິງ. ພວກເຮົາຄວນຍອມສະຫຼະຄວາມ ສຸກສ່ວນຕົວ ແທນທີ່ຈະລະເລີຍການສາມັກຄີທຳກັບພຣະເຈົ້າ. ການດຳລົງຊີວິດຢ່າງທຸກຍາກລຳບາກ ທີ່ສຸດ ແລະ ການປະຕິເສດຕົນເອງຢ່າງເລິກເຊິ່ງ ແຕ່ໄດ້ຮັບຄວາມໂປດປານຈາກພຣະອົງກໍຍັງດີກວ່າ

ຊັບສິນ, ກຽດຕິຍົດ, ຄວາມສະດວກສະບາຍ ແລະ ມິດຕະພາບໂດຍປາສະຈາກພຣະອົງ. ພວກເຮົາ ຕ້ອງຈັດສັນເວລາເພື່ອການອະທິຖານ; ຖ້າປ່ອຍໃຫ້ຈິດໃຈຈົດຈໍ່ກັບສິ່ງຝ່າຍໂລກ, ພຣະເຈົ້າອາດຈະໃຫ້ ເວລາແກ່ເຮົາ ໂດຍການເອົາສິ່ງທີ່ເຮົານັບຖືເໝືອນເປັນຮູບເຄົາລົບອອກໄປ ເຊັ່ນ: ເງິນຄຳ, ເຮືອນຊານ ແລະ ໄຮ່ນາຂອງພວກເຮົາ. *{GC 622.2}*

ຊາວໜຸ່ມຈະບໍ່ຖືກຊັກຈູງໄປສູ່ການເຮັດບາບ, ຖ້າພວກເຂົາບໍ່ຍອມເຂົ້າໄປໃນເສັ້ນທາງທີ່ບໍ່ສາມາດ ຂໍພຣະພອນຈາກພຣະເຈົ້າໄດ້. ຖ້າຜູ້ປະກາດຂ່າວຕັກເຕືອນຊາວໂລກເປັນຄັ້ງສຸດທ້າຍຈະອະທິຖານ ຂໍພຣະພອນຈາກພຣະເຈົ້າ ບໍ່ແມ່ນດ້ວຍຄວາມເຢັນຊາ, ເມີນເສີຍ ຫຼື ຂີ້ຄ້ານ ແຕ່ດ້ວຍຄວາມ ຮ້ອນຮົນ ແລະ ຄວາມເຊື່ອຄືກັນກັບຢາໂຄບ, ພວກເຂົາຈະພົບວ່າມີຫຼາຍຄັ້ງທີ່ສາມາດເວົ້າໄດ້ວ່າ: “ຂ້ອຍ ໄດ້ເຫັນພຣະເຈົ້າຕໍ່ໜ້າຕໍ່ຕາ ແລະ ຂ້ອຍຍັງບໍ່ຕາຍ.” (ປະຖົມມະການ 32:30). ສະຫວັນຈະຖືວ່າ ພວກເຂົາເປັນດັ່ງເຈົ້າຊາຍ ຜູ້ມີໄຊຊະນະກັບພຣະເຈົ້າ ແລະ ມະນຸດ. *{GC 622.3}*

“ຈະມີການລຳບາກໜັກເກີດຂຶ້ນຢ່າງບໍ່ເຄີຍມີມາ” (ດານີເອນ 12:1), ເຊິ່ງເວລານັ້ນໃກ້ຈະມາ ເຖິງພວກເຮົາແລ້ວ. ພວກເຮົາຈະຕ້ອງມີປະສົບການກັບພຣະເຈົ້າທີ່ພວກເຮົາຍັງບໍ່ມີໃນປັດຈຸບັນ ເຊິ່ງ ຫຼາຍຄົນກຳກຽດຄ້ານເກີນໄປທີ່ຈະສະແຫວງຫາ. ຕາມປົກກະຕິແລ້ວ ຄວາມກັງວົນກ່ຽວກັບສິ່ງທີ່ຈະ ເກີດຂຶ້ນ ມັກຈະຮ້າຍແຮງກວ່າເຫດການຕົວຈິງ, ແຕ່ບໍ່ແມ່ນໃນກໍລະນີຂອງວິກິດການທີ່ຈະມາເຖິງ ນີ້. ການບັນລະຍາຍທີ່ຊັດເຈນທີ່ສຸດ ກໍຍັງບໍ່ສາມາດສະແດງໃຫ້ເຫັນຄວາມຮ້າຍແຮງຂອງເຫດການ ທີ່ຈະເກີດຂຶ້ນ. ໃນຍາມທົດສອບນັ້ນ, ທຸກຄົນຈະຕ້ອງຢືນຢູ່ຕໍ່ພຣະພັກພຣະເຈົ້າດ້ວຍລຳພັງຕົນເອງ. “ເຖິງແມ່ນວ່າໂນອາ, ດານີເອນ ແລະ ໂຢບໄດ້ອາໄສຢູ່ທີ່ນັ້ນກໍຕາມ; ອົງພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວວ່າ ເຮົາມີຊີວິດຢູ່ຢ່າງແນ່ແທ້ສັນໃດ ພວກເຂົາກໍບໍ່ສາມາດຊ່ວຍແມ່ນແຕ່ຊີວິດລູກຂອງພວກເຂົາ ເອງໄດ້ສັນນັ້ນ. ຄຸນງາມຄວາມດີຂອງພວກເຂົາຈະຊ່ວຍຊີວິດຂອງພວກເຂົາເອງເທົ່ານັ້ນໄດ້.” (ເອເຊກຽນ 14:20). *{GC 622.4}*

ໃນເວລານີ້, ຂະນະທີ່ມະຫາປະໂຣຫິດຜູ້ຍິ່ງໃຫຍ່ ກຳລັງເຮັດການລຶບລ້າງຄວາມຜິດບາບເພື່ອເຮົາທັງ ຫຼາຍຢູ່ນັ້ນ, ພວກເຮົາຄວນສະແຫວງຫາທີ່ຈະເປັນຄົນສົມບູນດີພ້ອມໃນພຣະຄຣິສ. ພຣະຜູ້ຊ່ວຍໃຫ້ລອດ ຂອງພວກເຮົາບໍ່ເຄີຍຍອມແພ້ຕໍ່ການທົດລອງ ແມ່ນແຕ່ໃນຄວາມຄິດ. ເມື່ອຊາຕານພົບຈຸດອ່ອນໃນຈິດໃຈ ຂອງມະນຸດທີ່ມັນສາມາດເຂົ້າຄອບງຳເຊັ່ນ: ຄວາມປາຖະໜາໃນຄວາມບາບ, ມັນກໍຈະໃຊ້ຈຸດອ່ອນນັ້ນ ໃນການທົດລອງ. ແຕ່ພຣະຄຣິສຊົງກ່າວກ່ຽວກັບພຣະອົງເອງວ່າ: “ຜູ້ປົກຄອງໂລກນີ້ກຳລັງມາ ຜູ້ນັ້ນບໍ່ ມີສິດອຳນາດເໜືອເຮົາ.” (ໂຢຮັນ 14:30). ຊາຕານບໍ່ພົບສິ່ງໃດໃນພຣະບຸດຂອງພຣະເຈົ້າທີ່ຈະຊ່ວຍໃຫ້ ມັນໄດ້ຮັບໄຊຊະນະ. ພຣະອົງໄດ້ຮັກສາພຣະບັນຍັດຂອງພຣະບິດາ ແລະ ບໍ່ມີຄວາມບາບໃນພຣະອົງທີ່ ຊາຕານຈະໃຊ້ປະໂຫຍດໄດ້. ນີ້ແມ່ນສະພາບ ເຊິ່ງຜູ້ທີ່ຈະຢືນຢູ່ໄດ້ໃນຍາມທຸກຍາກລຳບາກອັນຍິ່ງໃຫຍ່ ນັ້ນຈະຕ້ອງມີ. *{GC 623.1}*

ຊີວິດນີ້ແຫຼະທີ່ພວກເຮົາຕ້ອງແຍກຕົວອອກຈາກຄວາມບາບ ໂດຍຄວາມເຊື່ອໃນພຣະໂລຫິດຂອງ ພຣະຄຣິສທີ່ລຶບລ້າງຄວາມບາບ. ພຣະຜູ້ຊ່ວຍໃຫ້ລອດຜູ້ປະເສີດ ຊົງເຊື້ອເຊີນເຮົາທັງຫຼາຍໃຫ້ຕິດ ສະໜິດກັບພຣະອົງ, ໃຫ້ຮັບເອົາກຳລັງຂອງພຣະອົງມາເສີມຄວາມອ່ອນແອຂອງພວກເຮົາ, ໃຫ້ຮັບເອົາ ພຣະປັນຍາມາເຕີມເຕັມຄວາມໂງ່ຈ້າ ແລະ ຮັບເອົາຄວາມດີຄວາມຊອບຂອງພຣະອົງມາທົດແທນຄວາມ ບໍ່ຄູ່ຄວນຂອງຕົນ. ພວກເຮົາຄວນຮຽນຮູ້ເຖິງຄວາມອ່ອນສຸພາບ ແລະ ຄວາມນອບນ້ອມຖ່ອມຕົນ ຂອງພຣະເຢຊູ ຜ່ານການຊົງນຳຂອງພຣະເຈົ້າ. ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງນຳພາພວກເຮົາໄປຕາມທາງ ສະດວກສະບາຍທີ່ພວກເຮົາມັກ ແຕ່ຊົງພາໄປຕາມທາງທີ່ນຳໄປສູ່ຈຸດປະສົງອັນແທ້ຈິງຂອງຊີວິດ. ຂຶ້ນຢູ່ ກັບເຮົາທັງຫຼາຍທີ່ຈະຮ່ວມມືກັບວິທີການທີ່ພຣະເຈົ້າຊົງໃຊ້ ໃນການປັບປຸງນຸປະນິໄສຂອງພວກເຮົາໃຫ້

ເປັນໄປຕາມແບບຢ່າງຂອງພຣະອົງ. ທຸກຄົນທີ່ລະເລີຍວຽກງານນີ້ ຫຼື ຜັດມື້ຜັດວັນ ຈະຕ້ອງພົບກັບ ອັນຕະລາຍອັນໜ້າຢ້ານຕໍ່ຈິດວິນຍານຂອງຕົນ. {GC 623.2}

ໃນນິມິດ, ອັກຄະສາວົກໂຢຮັນໄດ້ຍິນສຽງດັງຈາກສະຫວັນປະກາດວ່າ: “ວິບັດແກ່ແຜ່ນດິນໂລກ ແລະ ທະເລ, ເພາະວ່າມານຮ້າຍໄດ້ລົງໄປຫາພວກເຈົ້າແລ້ວ! ມັນເຕັມດ້ວຍຄວາມຄຽດແຄ້ນ, ເພາະມັນ ຮູ້ວ່າ ເວລາຂອງມັນມີໜ້ອຍ.” (ພຣະນິມິດ 12:12 LCV). ຍ້ອນເຫດການອັນໜ້າຢ້ານກົວທີ່ສຸດ ຈຶ່ງ ເຮັດໃຫ້ມີສຽງເຕືອນຈາກສະຫວັນເຊັ່ນນີ້. ເວລາຂອງຊາຕານຍິ່ງເຫຼືອໜ້ອຍເທົ່າໃດ ຄວາມໂກດແຄ້ນຂອງ ມັນກໍຍິ່ງເພີ່ມຂຶ້ນເທົ່ານັ້ນ. ການຫຼອກລວງກັບການທຳລາຍຂອງມັນຈະທະວີຄວາມຮຸນແຮງຢ່າງເຕັມທີ່ ໃນເວລາແຫ່ງຄວາມທຸກຍາກລຳບາກ. {GC 623.3}

ຊາຕານປອມຕົວເປັນພຣະຄຣິສ

ໃນບໍ່ຊ້າ, ຈະມີເຫດການເໜືອທຳມະຊາດອັນໜ້າຢ້ານກົວປາກົດຂຶ້ນໃນທ້ອງຟ້າ ເພື່ອສະແດງ ຣິດອຳນາດຂອງຜີມານໃນການເຮັດການອັດສະຈັນ. ວິນຍານຊົ່ວຈະອອກໄປຫາກະສັດທັງຫຼາຍທົ່ວໃຕ້ ຟ້າ ແລະ ມະນຸດສະໂລກທັງປວງ ເພື່ອເຮັດໃຫ້ພວກເຂົາຫຼົງຕາມການຫຼອກລວງຢ່າງດຶ້ນບໍ່ຫຼຸດ ແລະ ເພື່ອຊັກຈູງໃຫ້ເຂົ້າຮ່ວມກັບຊາຕານໃນການຕໍ່ສູ້ກັບການປົກຄອງແຫ່ງສະຫວັນເປັນຄັ້ງສຸດທ້າຍ. ທັງ ຜູ້ປົກຄອງ ແລະ ປະຊາຊົນຈະຫຼົງເຊື່ອການຫຼອກລວງເຫຼົ່ານີ້. ຈະມີບາງຄົນອອກມາອ້າງວ່າ ຕົນ ເປັນພຣະຄຣິສ, ແລະຈະຮຽກຮ້ອງໃຫ້ຄົນນະມັດສະການຕົນເໝືອນດັ່ງພຣະຜູ້ຊ່ວຍໃຫ້ລອດ. ພວກເຂົາ ຈະເຮັດການອັດສະຈັນດ້ວຍການປິ່ນປົວພະຍາດ ແລະ ຈະອ້າງວ່າຕົນໄດ້ຮັບການເປີດເຜີຍຈາກ ສະຫວັນ ເຊິ່ງຂັດແຍ້ງກັບພຣະຄຳພີ. {GC 624.1}

ໃນບົດສຸດທ້າຍແຫ່ງການຫຼອກລວງອັນຍິ່ງໃຫຍ່ນີ້ ຊາຕານຈະປອມຕົວເປັນພຣະຄຣິສ. ຄຣິສຕະຈັກ ທັງຫຼາຍໄດ້ປະກາດມາເປັນເວລາດົນນານວ່າ ການສະເດັດມາຂອງພຣະຜູ້ໄຖ່ ແມ່ນຄວາມຫວັງສູງສຸດ ຂອງຕົນ. ບັດນີ້, ຊາຕານຈະເຮັດໃຫ້ເບິ່ງຄືວ່າ ພຣະຄຣິສໄດ້ສະເດັດມາແລ້ວ. ໃນຫຼາຍແຫ່ງທົ່ວ ໂລກ ຊາຕານຈະປາກົດຕົວໃຫ້ມະນຸດເຫັນໃນລັກສະນະຜູ້ຍິ່ງໃຫຍ່ທີ່ມີຣັດສະໝີພາບເຮືອງຮອງ ຄືກັນກັບ ລັກສະນະຂອງພຣະບຸດຂອງພຣະເຈົ້າທີ່ໂຢຮັນໄດ້ບັນລະຍາຍໄວ້ໃນພຣະທຳພຣະນິມິດ. (ເບິ່ງ ພຣະນິມິດ 1:13–15). ແສງຣັດສະໝີຂອງມັນສະຫວ່າງສະໄຫວກວ່າທຸກສິ່ງທີ່ຕາມະນຸດເຄີຍເຫັນມາ. ສຽງໂຮ່ຮ້ອງ ແຫ່ງໄຊຊະນະດັງກ້ອງໄປວ່າ: “ພຣະຄຣິສສະເດັດມາແລ້ວ! ພຣະຄຣິສສະເດັດມາແລ້ວ!” ຜູ້ຄົນພາກັນ ກົ້ມຂາບໄຫວ້ມັນ ໃນຂະນະທີ່ມັນຍົກມືຂຶ້ນອວຍພອນພວກເຂົາ ຄືກັນກັບທີ່ພຣະຄຣິສໄດ້ອວຍພອນ ພວກສາວົກຂອງພຣະອົງເມື່ອຢູ່ໃນໂລກ. ສຽງຂອງມັນນຸ້ມນວນ ແລະ ມີທ່ວງທຳນອງອັນໜ້າຟັງ. ມັນ ປະກາດຄວາມຈິງອັນປະເສີດຈາກສະຫວັນດ້ວຍນ້ຳສຽງທີ່ອ່ອນໂຍນ ແລະ ເຕັ່ມໄປດ້ວຍຄວາມເມດຕາ ເໝືອນກັບທີ່ພຣະຜູ້ໄຖ່ເຄີຍກ່າວໄວ້. ມັນປິ່ນປົວພະຍາດຂອງປະຊາຊົນ ແລ້ວໃນຖານະທີ່ສວມບົດ ບາດເປັນພຣະຄຣິສ ມັນອ້າງວ່າໄດ້ປ່ຽນວັນສະບາໂຕເປັນວັນອາທິດ ແລະ ສັ່ງໃຫ້ທຸກຄົນຖືຮັກສາ ວັນທີ່ມັນອວຍພອນນັ້ນໃຫ້ເປັນວັນສັກສິດ. ມັນປະກາດວ່າ ຜູ້ທີ່ຍັງຖືວັນທີເຈັດເປັນວັນບໍຣິສຸດນັ້ນ ກຳລັງໝິ່ນປະໝາດນາມຊື່ຂອງມັນ ໂດຍການບໍ່ຍອມເຊື່ອຟັງທູດຂອງມັນ ທີ່ຖືກສົ່ງໄປພ້ອມກັບຄວາມ ສະຫວ່າງ ແລະ ຄວາມຈິງ. ນີ້ແມ່ນການຫຼອກລວງທີ່ມີພະລັງອຳນາດ ຈົນເກືອບບໍ່ມີໃຜຕ້ານທານ ໄດ້. ຝູງຊົນນ້ອຍໃຫຍ່ພາກັນຫຼົງເຊື່ອມົນສະກົດເຫຼົ່ານີ້ ເໝືອນກັບຊາວຊາມາເຣຍທີ່ຖືກຊີໂມນໝໍເວດມົນ ຄາຖາຫຼອກລວງ. ພວກເຂົາຈະເວົ້າວ່າ: “ຊາຍຜູ້ນີ້ເປັນຣິດອຳນາດຂອງພຣະເຈົ້າ ທີ່ເອີ້ນກັນວ່າ ມະຫິດທິຣິດ.” (ກິດຈະການ 8:10 LCV). {GC 624.2}

ຄົນຂອງພຣະເຈົ້າບໍ່ຫຼົງກົນ

ແຕ່ໄພ່ພົນຂອງພຣະເຈົ້າຈະບໍ່ຖືກຫຼອກລວງ. ຄຳສອນຂອງພຣະຄຣິສປອມນີ້ບໍ່ສອດຄ່ອງກັບພຣະ-ຄຳພີ. ມັນອວຍພອນຜູ້ທີ່ນະມັດສະການສັດຮ້າຍ ແລະ ຮູບຈຳລອງຂອງມັນ, ເຊິ່ງແມ່ນກຸ່ມດຽວກັນກັບທີ່ພຣະຄຳພີປະກາດວ່າ ຈະຕ້ອງຖືກພຣະພິໂຣດຂອງພຣະເຈົ້າລົງໂທດໂດຍບໍ່ມີຄວາມປານີ. *{GC 625.1}*

ຍິ່ງໄປກວ່ານັ້ນ, ຊາຕານກໍບໍ່ໄດ້ຮັບອະນຸຍາດໃຫ້ປອມແປງລັກສະນະຂອງການສະເດັດກັບມາຂອງພຣະຄຣິສ. ພຣະຜູ້ຊ່ວຍໃຫ້ລອດໄດ້ເຕືອນໄພ່ພົນຂອງພຣະອົງບໍ່ໃຫ້ຖືກຫຼອກລວງໃນເລື່ອງນີ້ ແລະ ຊົງ ທຳນວາຍຢ່າງຈະແຈ້ງເຖິງລັກສະນະການສະເດັດມາຄັ້ງທີສອງຂອງພຣະອົງ. “ດ້ວຍວ່າ, ຈະມີພຣະຄຣິສ ປອມ ແລະ ຜູ້ທຳນວາຍປອມປາກົດຂຶ້ນ; ພວກເຂົາຈະສະແດງໝາຍສຳຄັນ ແລະ ການອັດສະຈັນອັນ ຍິ່ງໃຫຍ່ຫຼາຍປະການ, ຖ້າເປັນໄປໄດ້ ຈະຫຼອກລວງແມ່ນແຕ່ຜູ້ທີ່ໄດ້ເລືອກໄວ້ . . . ດັ່ງນັ້ນ, ຖ້າມີຄົນບອກ ພວກເຈົ້າວ່າ, ‘ເພິ່ນຢູ່ທີ່ນັ້ນ ໃນຖິ່ນແຫ້ງແລ້ງກັນດານ’ ຢ່າໄດ້ອອກໄປທີ່ນັ້ນ ຫຼື ມີຄົນບອກວ່າ, ‘ເພິ່ນ ຢູ່ທີ່ນີ້ໃນຫ້ອງດ້ານໃນ’ ກໍຢ່າໄດ້ເຊື່ອ. ດ້ວຍວ່າ, ຟ້າແມບເຫຼື້ອມອອກມາຈາກທິດຕາເວັນອອກ ເບິ່ງ ເຫັນໄດ້ແມ່ນແຕ່ຢູ່ທິດຕາເວັນຕົກຢ່າງໃດ ການມາຂອງບຸດມະນຸດກໍຈະເປັນຢ່າງນັ້ນ.” (ມັດທາຍ 24:24–27 LCV; ເບິ່ງ ຂໍ້ 31; 25:31; ພຣະນິມິດ 1:7; 1 ເທສະໂລນີກ 4:16, 17). ລັກສະນະ ຂອງການສະເດັດມານີ້ ບໍ່ສາມາດປອມແປງໄດ້. ມັນຈະເປັນເຫດການທີ່ປະຈັກແຈ້ງແກ່ມະນຸດທຸກ ຄົນ. *{GC 625.2}*

ມີແຕ່ຜູ້ທີ່ໄດ້ສຶກສາພຣະຄຳພີຢ່າງພາກພຽນ ແລະ ມີຈິດໃຈຮັກຄວາມຈິງເທົ່ານັ້ນ ຈຶ່ງຈະພົ້ນ ຈາກການຫຼອກລວງອັນຍິ່ງໃຫຍ່ທີ່ຄອບງຳມະນຸດສະໂລກ. ພຣະຄຳພີຈະຊ່ວຍພວກເຂົາໃຫ້ຈັບຜິດ ຜູ້ຫຼອກລວງໄດ້ ເຖິງແມ່ນວ່າມັນຈະປອມຕົວມາກໍຕາມ. ເວລາແຫ່ງການທົດສອບຈະມາເຖິງທຸກ ຄົນ, ແລະຄຣິສຕຽນແທ້ຈະຖືກເປີດເຜີຍໃຫ້ເຫັນຜ່ານການທົດລອງທີ່ຄັດເລືອກນີ້. ໃນປັດຈຸບັນ, ຄົນ ຂອງພຣະເຈົ້າໄດ້ຍືນຢັດໝັ້ນຄົງໃນພຣະຄຳຂອງພຣະອົງຈົນບໍ່ຫວັ່ນໄຫວຕໍ່ສິ່ງທີ່ຕາເຫັນ ແລະ ຫູ ໄດ້ຍິນຫຼືບໍ່? ໃນຍາມວິກິດນັ້ນ, ພວກເຂົາຈະຍຶດໝັ້ນໃນພຣະຄຳພີພຽງຢ່າງດຽວເທົ່ານັ້ນຫຼືບໍ່? ຊາຕານ ຈະພະຍາຍາມດ້ວຍສຸດກຳລັງເພື່ອຂັດຂວາງບໍ່ໃຫ້ພວກເຂົາກຽມພ້ອມສຳລັບວັນນັ້ນ. ມັນຈະຈັດວາງ ສະພາບການ ເພື່ອປິດກັ້ນທາງຂອງພວກເຂົາ, ໃຫ້ຄົນຂອງພຣະເຈົ້າຫຼົງລະເລີງກັບຊັບສົມບັດທາງ ໂລກ, ເຮັດໃຫ້ພວກເຂົາແບກພາລະອັນໜັກໜ່ວງ ເພື່ອໃຫ້ຈິດໃຈຂອງພວກເຂົາເຕັມໄປດ້ວຍຄວາມ ກັງວົນໃນຊີວິດນີ້ ແລ້ວວັນແຫ່ງການທົດລອງນັ້ນຈະມາເຖິງພວກເຂົາຢ່າງກະທັນຫັນ ເໝືອນດັ່ງ ຂະໂມຍ. *{GC 625.3}*

ບັນດາຜູ້ນຳປະເທດທີ່ນັບຖືສາສະໜາຄຣິສເປັນຫຼັກ ຈະປະກາດຕໍ່ຕ້ານຜູ້ທີ່ຖືຮັກສາພຣະບັນຍັດ ຂອງພຣະເຈົ້າ ແລະ ຈະຖອນການປົກປ້ອງຄຸ້ມຄອງອອກໄປຈາກຄົນຂອງພຣະອົງ, ເຮັດໃຫ້ໄພ່ພົນ ຂອງພຣະເຈົ້າຖືກປ່ອຍໄວ້ໃນມືຂອງຜູ້ທີ່ຢາກທຳລາຍພວກເຂົາ. ເມື່ອນັ້ນ, ຄົນຂອງພຣະເຈົ້າຈະໜີ ອອກຈາກເມືອງ ແລະ ຈາກຊຸມຊົນໝູ່ບ້ານ ແລ້ວຈະມາຮ່ວມຕົວກັນເປັນກຸ່ມອາໄສຢູ່ໃນບ່ອນສອກຫຼີກ ທີ່ເປົ່າປ່ຽວທີ່ສຸດ. ຫຼາຍຄົນຈະພົບບ່ອນລີ້ໄພຕາມພູຜາ. ເໝືອນດັ່ງຄຣິສຕຽນຊາວໂວດົວແຫ່ງຮ່ອມພູ ພິດມົ້ງ, ພວກເຂົາຈະນະມັດສະການໃນທີ່ສູງຂອງແຜ່ນດິນໂລກ ແລະ ຈະຂອບພຣະຄຸນພຣະເຈົ້າ ສຳລັບ “ປ້ອມປ້ອງກັນອັນເຂັ້ມແຂງ.” (ເອຊາຢາ 33:16). ແຕ່ຫຼາຍຄົນຈາກທຸກຊົນຊາດ ແລະ ທຸກ ຊົນຊັ້ນ ບໍ່ວ່າຈະເປັນຜູ້ມີກຽດ ຫຼື ຜູ້ຕ່ຳຕ້ອຍ, ຄົນຮັ່ງມີ ຫຼື ຄົນຍາກຈົນ, ຄົນຜິວດຳ ຫຼື ຄົນ ຜິວຂາວ ຈະຖືກຈັບມັດໄວ້ຢ່າງໂຫດຮ້າຍທີ່ສຸດ ແລະ ບໍ່ເປັນທຳ. ຜູ້ທີ່ພຣະເຈົ້າຊົງຮັກຈະຜ່ານວັນ ເວລາອັນເມື່ອຍລ້າຢ່າງຍາກລຳບາກ. ບາງຄົນຈະຖືກລ່ວງໂສ້, ຖືກຂັງໄວ້ໃນຄຸກ ແລະ ຖືກຕັດສິນ

ປະຫານຊີວິດ; ບາງຄົນເບິ່ງຄືຖືກປະໄວ້ໃຫ້ອຶດຕາຍໃນຄຸກມືດອັນເໝັນສົກກະປົກ. ບໍ່ມີໜູມະນຸດທີ່ຈະຮັບຟັງສຽງຮ້ອງຄວນຄາງຂອງພວກເຂົາ, ບໍ່ມີມະນຸດຄົນໃດທີ່ພ້ອມຈະຍື່ນມືອອກມາຊ່ວຍເຫຼືອພວກເຂົາ. *{GC 626.1}*

ໃນເວລາແຫ່ງການທົດລອງນີ້, ພຣະເຈົ້າຈະຊົງລືມໄພ່ພົນຂອງພຣະອົງບໍ? ພຣະອົງບໍ່ໄດ້ລືມໂນອາ ຜູ້ສັດຊື່ ເມື່ອພຣະອົງຊົງລົງໂທດຊາວໂລກໃນສະໄໝນັ້ນ. ພຣະອົງບໍ່ໄດ້ລືມໂລດ ເມື່ອໄຟຈາກສະຫວັນຕົກລົງມາເຜົາຜານເມືອງໂຊໂດມ ກັບເມືອງອື່ນໃນທີ່ຮາບທົ່ງພຽງ. ພຣະອົງບໍ່ໄດ້ລືມໂຢເຊັບ ເມື່ອເພິ່ນຖືກອ້ອມຮອບດ້ວຍຄົນທີ່ຂາບໄຫວ້ຮູບເຄົາລົບໃນປະເທດເອຢິບ. ພຣະອົງບໍ່ໄດ້ລືມເອລີຢາ ເມື່ອພຣະນາງເຢເຊເບນສາບານວ່າ ຈະເຮັດໃຫ້ເພິ່ນເປັນຄືກັນກັບພວກຜູ້ທຳນວາຍຂອງພຣະບາອານທີ່ຖືກຂ້າຕາຍ. ພຣະອົງບໍ່ໄດ້ລືມເຢເຣມີຢາໃນບໍ່ນ້ຳສ້າງອັນມືດມົນ ແລະ ພຣະອົງບໍ່ໄດ້ລືມຊາຍໜຸ່ມສາມຄົນໃນເຕົາໄຟອັນແຮງກ້າ ຫຼື ດານີເອນໃນຖ້ຳສິງ. *{GC 626.2}*

“ປະຊາຊົນຊາວເຢຣູຊາເລັມນັ້ນເວົ້າວ່າ, ‘ອົງພຣະຜູ້ເປັນເຈົ້າປະຖິ້ມ ແລະ ລືມໄລພວກເຮົາ.’” “ຍິງຜູ້ໜຶ່ງລືມໄລລູກທີ່ຕົນຄອດໄດ້ຫຼືບໍ່? ເຖິງວ່າແມ່ຈະລືມໄລລູກຂອງຕົນກໍຕາມ ແຕ່ເຮົາຈະບໍ່ລືມໄລພວກເຈົ້າຈັກເທື່ອ . . . ເຮົາລືມໄລເຈົ້າບໍ່ໄດ້ເລີຍ ເຮົາຂຽນຊື່ເຈົ້າໃສ່ຝ່າມືຂອງເຮົາແລ້ວ.” (ເອຊາຢາ 49:14–16 LO2012). ພຣະເຈົ້າອົງຊົງຣິດຊົງກ່າວວ່າ: “ຜູ້ໃດຜູ້ໜຶ່ງທີ່ຕົບຕີພວກເຈົ້າ ກໍສ່ຳກັບຕົບຕີແກ້ວຕາຂອງເຮົາ.” (ເຊກາຣີຢາ 2:8). *{GC 626.3}*

ເຖິງແມ່ນສັດຕູຈະຈັບພວກເຂົາເຂົ້າຄຸກ ແຕ່ຝາຫ້ອງຂັງກໍບໍ່ສາມາດກີດກັ້ນຄວາມສຳພັນລະຫວ່າງພວກເຂົາກັບພຣະຄຣິສ. ພຣະອົງຜູ້ເຫັນຄວາມອ່ອນແອທຸກຢ່າງ ແລະ ຮູ້ຈັກການທົດລອງທັງໝົດຂອງພວກເຂົານັ້ນ ຊົງຢູ່ເໜືອອຳນາດທັງປວງໃນໂລກນີ້. ເຫຼົ່າທູດສະຫວັນຈະມາຢ້ຽມຢາມພວກເຂົາໃນຫ້ອງຂັງທີ່ໂດດດ່ຽວ ເພື່ອນຳເອົາແສງສະຫວ່າງ ແລະ ສັນຕິສຸກຈາກສະຫວັນມາໃຫ້. ຄຸກຈະກາຍເປັນເໝືອນດັ່ງຣາຊວັງ ເພາະຄົນທີ່ມີຄວາມເຊື່ອຢ່າງລົ້ນຫຼາຍຢູ່ທີ່ນັ້ນ. ແສງສະຫວ່າງຈາກສະຫວັນ ຈະຂັບໄລ່ຄວາມມືດມົນທີ່ທອດເງົາຢູ່ຝາຫ້ອງຂັງ ຄ້າຍຄືເວລາໂປໂລກັບຊີລາອະທິຖານ ແລະ ຮ້ອງເພງສັນລະເສີນຍາມທ່ຽງຄືນທີ່ຄຸກແຫ່ງເມືອງຟີລິບປອຍ. *{GC 627.1}*

ໄພພິບັດຈາກພຣະເຈົ້າ

ພຣະເຈົ້າຈະຊົງລົງໂທດຜູ້ທີ່ກົດຂີ່ຂົ່ມເຫັງ ແລະ ພະຍາຍາມທຳລາຍໄພ່ພົນຂອງພຣະອົງ. ການອົດກັ້ນພຣະໄທຂອງພຣະອົງຕໍ່ຄົນຊົ່ວ ເຮັດໃຫ້ພວກເຂົາກ້າເຮັດຄວາມຜິດບາບຫຼາຍຂຶ້ນ, ແຕ່ເຖິງແມ່ນວ່າການລົງໂທດຈະຊັກຊ້າ ມັນກໍຈະເກີດຂຶ້ນຢ່າງແນ່ນອນ ແລະ ຈະເປັນການລົງໂທດທີ່ໜ້າຢ້ານກົວ. “ພຣະເຢໂຮວາຈະຊົງລຸກຂຶ້ນເໝືອນດັ່ງທີ່ເທິງພູເຂົາເປຣິຊິມ; ພຣະອົງຈະໂກດຮ້າຍເໝືອນຢ່າງທີ່ໃນຮ່ອມພູກີເບໂອນ ເພື່ອກະທຳພຣະຣາຊກິດຂອງພຣະອົງ ພຣະຣາຊກິດຂອງພຣະອົງນັ້ນປະຫຼາດ ແລະ ເພື່ອກະທຳງານຂອງພຣະອົງ ງານຂອງພຣະອົງກໍແປກ.” (ເອຊາຢາ 28:21 ດັດແປງຈາກສະບັບ TKJV). ສຳລັບພຣະເຈົ້າຜູ້ຊົງເມດຕາຂອງພວກເຮົາ ການລົງໂທດເປັນການກະທຳທີ່ແປກປະຫຼາດ. “ອົງພຣະ-ຜູ້ເປັນເຈົ້າ ພຣະເຈົ້າກ່າວວ່າ ເຮົາມີຊີວິດຢູ່ຢ່າງແນ່ແທ້ ເຮົາຈະບໍ່ດີໃຈເມື່ອເຫັນຄົນບາບຜູ້ໜຶ່ງຕາຍໄປ.” (ເອເຊກຽນ 33:11). ພຣະຜູ້ເປັນເຈົ້າຊົງ “ເຕັມດ້ວຍຄວາມເມດຕາ ແລະ ພຣະຄຸນ, ບໍ່ຮ້າຍງ່າຍ, ເຕັມໄປດ້ວຍຄວາມຮັກ ແລະ ຄວາມຊື່ສັດ, . . . ແລະ ໃຫ້ອະໄພຄວາມຊົ່ວຮ້າຍ, ການກະບົດ ແລະ ບາບ.” ເຖິງຢ່າງໃດກໍຕາມ, “ພຣະອົງຈະບໍ່ລະເວັ້ນໂທດຜູ້ທີ່ເຮັດຜິດ.” “ອົງພຣະຜູ້ເປັນເຈົ້າບໍ່ໂກດງ່າຍ ແລະ ຊົງຣິດທານຸພາບຍິ່ງໃຫຍ່. ອົງພຣະຜູ້ເປັນເຈົ້າ ຈະບໍ່ຊົງປ່ອຍໃຫ້ຄົນຜິດລອຍນວນພົ້ນໂທດ.” (ອົບພະຍົບ 34:6, 7 LCV; ນາຮູມ 1:3 ດັດແປງຈາກສະບັບ TNCV). ພຣະເຈົ້າຈະຊົງ

ສຳແດງຄວາມຊອບທຳຢ່າງໜ້າຢ້ານຢຳ ເພື່ອພິສູດວ່າພຣະບັນຍັດຂອງພຣະອົງທີ່ຖືກໝິ່ນປະໝາດນັ້ນ ຍັງມີຜົນບັງຄັບໃຊ້. ເຮົາຈະເຫັນໄດ້ວ່າ ການລົງໂທດທີ່ລໍຖ້າຜູ້ລະເມີດນັ້ນຮຸນແຮງຫຼາຍ ເພາະພຣະເຈົ້າ ຊົງລັງເລທີ່ຈະລົງໂທດ. ເມື່ອພຣະເຈົ້າຊົງອົດທົນຢ່າງດົນນານກັບຊົນຊາດໃດໜຶ່ງ ແລະ ບໍ່ລົງໂທດຈົນ ກວ່າພວກເຂົາຈະເຮັດບາບເຖິງຂີດສຸດໃນປຶ້ມບັນທຶກຂອງພຣະອົງ, ໃນທີ່ສຸດ, ຊົນຊາດນັ້ນຈະຕ້ອງດື່ມ ຈາກຈອກແຫ່ງພຣະພິໂຣດຂອງພຣະອົງໂດຍປາສະຈາກຄວາມເມດຕາ. {GC 627.2}

ເມື່ອພຣະຄຣິສຊົງຢຸດການອ້ອນວອນເພື່ອມະນຸດໃນສະຖານນະມັດສະການ, ພຣະພິໂຣດຂອງພຣະ-ເຈົ້າຈະຖືກຖອກເທລົງມາເໜືອຜູ້ທີ່ນະມັດສະການສັດຮ້າຍກັບຮູບຈຳລອງຂອງມັນ ແລະ ຮັບເອົາ ເຄື່ອງໝາຍຂອງມັນ. ພຣະພິໂຣດນັ້ນຈະບໍ່ປະສົມກັບຄວາມເມດຕາ ເໝືອນດັ່ງທີ່ຊົງເຕືອນໄວ້. (ເບິ່ງ ພຣະນິມິດ 14:9, 10). ໄພພິບັດທີ່ຕົກສູ່ປະເທດເອຢິບເມື່ອພຣະເຈົ້າປົດປ່ອຍຊາວອິດສະຣາເອນ ນັ້ນ ມີລັກສະນະຄ້າຍຄືກັບການລົງໂທດມະນຸດສະໂລກກ່ອນການປົດປ່ອຍໄພ່ພົນຂອງພຣະເຈົ້າເປັນຄັ້ງ ສຸດທ້າຍ; ແຕ່ການລົງໂທດໃນຄັ້ງຫຼັງນີ້ຈະຮຸນແຮງກວ່າ ແລະ ກວ້າງຂວາງກວ່າໄພພິບັດໃນເອຢິບ. ໂຢຮັນ ພັນລະນາໃນພຣະທຳພຣະນິມິດເຖິງໄພພິບັດອັນໜ້າຢ້ານກົວເຫຼົ່ານີ້ວ່າ: “ບາດແຜອັນໜ້າກຽດທີ່ສ້າງ ຄວາມເຈັບປວດ ກໍເກີດຂຶ້ນຕາມໂຕຂອງບັນດາຜູ້ທີ່ມີເຄື່ອງໝາຍຂອງສັດຮ້າຍ ແລະ ຂາບໄຫວ້ຮູບ ຈຳລອງຂອງມັນ. . . . ທະເລນັ້ນ ກໍກາຍເປັນເລືອດ ເໝືອນດັ່ງເລືອດຂອງຄົນຕາຍ ແລະ ສິ່ງທີ່ມີຊີວິດ ທີ່ອາໄສຢູ່ໃນທະເລນັ້ນກໍຕາຍໝົດ. . . . ແມ່ນ້ຳ ແລະ ບໍ່ນ້ຳພຸທັງຫຼາຍ . . . ກໍກາຍເປັນເລືອດ.” ເຖິງແມ່ນ ການລົງໂທດເຫຼົ່ານີ້ຈະຮ້າຍແຮງ, ແຕ່ຄວາມຍຸຕິທຳຂອງພຣະເຈົ້າກໍປາກົດຢ່າງຈະແຈ້ງ. ທູດສະຫວັນ ຂອງພຣະເຈົ້າປະກາດວ່າ: “ພຣະອົງພິພາກສາລົງໂທດຢ່າງຍຸຕິທຳແລ້ວ, ເນື່ອງຈາກພວກເຂົາໄດ້ ເຮັດໃຫ້ຜູ້ບໍຣິສຸດຂອງພຣະເຈົ້າ ແລະ ຜູ້ທຳນວາຍຂອງພຣະອົງຕ້ອງຫຼັ່ງເລືອດ ແລະ ພຣະອົງເອົາ ເລືອດໃຫ້ພວກເຂົາດື່ມ ຕາມທີ່ພວກເຂົາສົມຄວນໄດ້ຮັບ.” (ພຣະນິມິດ 16:2–6 LCV). ການ ທີ່ຊາວໂລກຕັດສິນປະຫານຊີວິດຄົນຂອງພຣະເຈົ້ານັ້ນ ກໍເຮັດໃຫ້ພວກເຂົາມີຄວາມຜິດເໝືອນໄດ້ລົງ ມືຂ້າຈິງ. ໃນທຳນອງດຽວກັນ, ພຣະຄຣິສຊົງກ່າວວ່າ ຊາວຢິວໃນສະໄໝຂອງພຣະອົງ ມີຄວາມ ຜິດໃນເລື່ອງຄວາມຕາຍຂອງບັນດາຄົນບໍຣິສຸດທີ່ຖືກຂ້າຕາຍ ນັບຕັ້ງແຕ່ສະໄໝຂອງອາເບັນ ເພາະ ພວກເຂົາມີຈິດໃຈແບບດຽວກັນ ແລະ ພະຍາຍາມຂ້າຄົນແບບດຽວກັນກັບພວກທີ່ຂ້າຜູ້ເຜີຍພຣະທຳ ເຫຼົ່ານັ້ນ. {GC 627.3}

ໃນໄພພິບັດຕໍ່ມາ ດວງຕາເອັນຈະຮັບອຳນາດ “ໃຫ້ເຜົາໄໝ້ຄົນທັງຫຼາຍດ້ວຍໄຟ. ພວກເຂົາຖືກເຜົາ ດ້ວຍຄວາມຮ້ອນກ້າ.” (ພຣະນິມິດ 16:8, 9 LCV). ພວກຜູ້ເຜີຍພຣະທຳໄດ້ພັນລະນາເຖິງສະພາບ ຂອງໂລກໃນເວລາອັນໜ້າຢ້ານກົວນີ້ວ່າ: “ທີ່ດິນກໍຈົມຢູ່ໃນຄວາມງຽບເຫງົາທັງສິ້ນ. . . . ຜົນລະປູກ ທັງໝົດກໍຖືກທຳລາຍກ້ຽງ. . . . ຕົ້ນໝາກໄມ້ທຸກໆຕົ້ນກໍຫ່ຽວແຫ້ງຕາຍໄປ ຄວາມຊົມຊື່ນຂອງປະຊາຊົນ ກໍສູນຫາຍໄປສິ້ນ.” “ເມັດພືດຕາຍໃນດິນແຫ້ງ ບໍ່ມີເຂົ້າໃນສາງ . . . ຍ້ອນບໍ່ມີຫຍ້າ ຝູງສັດລ້ຽງກໍ ສັບສົນວຸ້ນວາຍ . . . ທົ່ງຫຍ້າຕົ້ນໄມ້ແຫ້ງຕາຍ ແລະ ຖືກໄຟໄໝ້ . . . ນ້ຳໃນຫ້ວຍຮ່ອງເຫືອດແຫ້ງລົງ ໝົດສິ້ນ.” “ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຊົງກ່າວວ່າ ‘ໃນວັນນັ້ນ ສຽງເພງໃນພຣະວິຫານຈະເປັນ ສຽງຮ່ຳໄຫ້ ຈະມີສົບມາກມາຍທຸກແຫ່ງຖືກຖິ້ມໄວ້ງຽບໆ.’” (ໂຢເອນ 1:10–12, 17–20; ອາໂມດ 8:3 ດັດແປງຈາກສະບັບ TKJV). {GC 628.1}

ໄພພິບັດເຫຼົ່ານີ້ບໍ່ໄດ້ເກີດຂຶ້ນທ່ວທຸກບ່ອນໃນໂລກ ຖ້າບໍ່ດັ່ງນັ້ນ ຊາວໂລກທັງໝົດກໍຈະຖືກທຳລາຍ. ເຖິງຢ່າງໃດກໍຕາມ, ໄພພິບັດເຫຼົ່ານີ້ຈະຮ້າຍແຮງທີ່ສຸດເທົ່າທີ່ມະນຸດເຄີຍປະສົບພົບພໍ້. ການລົງໂທດ ທັງໝົດທີ່ເຄີຍເກີດກັບມະນຸດກ່ອນເວລາແຫ່ງພຣະກະລຸນາຈະໝົດໄປນັ້ນ ລ້ວນແຕ່ປະສົມປະສານ ດ້ວຍພຣະເມດຕາ. ພຣະຄຣິສໄດ້ຖວາຍພຣະໂລຫິດຂອງພຣະອົງ ເພື່ອປົກປ້ອງຄົນບາບບໍ່ໃຫ້ໄດ້ຮັບ

ການລົງໂທດຕາມຂະໜາດຄວາມຜິດບາບຂອງຕົນ, ແຕ່ໃນການລົງໂທດຄັ້ງສຸດທ້າຍ ພຣະພິໂຣດຂອງພຣະເຈົ້າຈະຖືກຖອກເທລົງມາໂດຍປາສະຈາກພຣະເມດຕາ. *{GC 628.2}*

ໃນວັນນັ້ນ, ຫຼາຍຄົນຈະປາຖະໜາການປົກປ້ອງຈາກພຣະກະລຸນາຂອງພຣະເຈົ້າ ທີ່ພວກເຂົາໄດ້ດູໝິ່ນເປັນເວລາດົນນານ. “ເວລາໃກ້ເຂົ້າມາແລ້ວ ເມື່ອເຮົາຈະໃຫ້ການອຶດຢາກເກີດຂຶ້ນໃນແຜ່ນດິນ. ປະຊາຊົນຈະຫິວເຂົ້າແຕ່ບໍ່ແມ່ນຫິວເຂົ້າຈີ່; ພວກເຂົາຈະຄໍແຫ້ງແຕ່ບໍ່ແມ່ນກະຫາຍນ້ຳ; ພວກເຂົາຈະຫິວກະຫາຍຖ້ອຍຄຳຈາກອົງພຣະຜູ້ເປັນເຈົ້າ. ອົງພຣະຜູ້ເປັນເຈົ້າ ພຣະເຈົ້າກ່າວດັ່ງນີ້ແຫຼະ. ປະຊາຊົນຈະທ່ອງທ່ຽວໄປມາ ແຕ່ທະເລຕາຍຈົນເຖິງທະເລເມດິແຕຣາເນ ແລ້ວແຕ່ທາງເໜືອໄປສູ່ທາງຕາເວັນອອກ. ພວກເຂົາຈະຊອກຫາຖ້ອຍຄຳຂອງອົງພຣະຜູ້ເປັນເຈົ້າຈາກທຸກທີ່ທຸກບ່ອນ ແຕ່ພວກເຂົາຈະບໍ່ພົບ.” (ອາໂມດ 8:11–12 LO2012). *{GC 629.1}*

ຄົນຂອງພຣະເຈົ້າຈະໄດ້ຮັບການຄຸ້ມຄອງ

ເຖິງແມ່ນວ່າ ໄພ່ພົນຂອງພຣະເຈົ້າຕ້ອງປະສົບກັບຄວາມທຸກ ແຕ່ໃນຂະນະທີ່ພວກເຂົາຖືກຂົ່ມເຫັງ, ມີຄວາມທຸກໃຈ, ຂາດເຂີນ ແລະ ອຶດຢາກ ພວກເຂົາຈະບໍ່ຖືກປະຖິ້ມໃຫ້ຕາຍ. ພຣະເຈົ້າຜູ້ຊົງເບິ່ງແຍງເອລີຢາໃນອະດີດຈະບໍ່ເມີນເສີຍຕໍ່ລູກຂອງພຣະອົງທີ່ເສຍສະຫຼະຕົນເອງແມ່ນແຕ່ຜູ້ດຽວ. ພຣະອົງຊົງນັບເສັ້ນຜົມຂອງພວກເຂົາ ແລະ ຈະຊົງດູແລພວກເຂົາ; ໃນຍາມອຶດຢາກພວກເຂົາຈະມີພຽງພໍ. ໃນຂະນະທີ່ຄົນຊົ່ວກຳລັງຕາຍຍ້ອນຄວາມອຶດຢາກ ແລະ ໂຣກລະບາດ ເຫຼົ່າທູດສະຫວັນຈະປົກປ້ອງຄົນຊອບທຳ ແລະ ຈັດຫາສິ່ງທີ່ຈຳເປັນໃຫ້ແກ່ພວກເຂົາ. ພຣະເຈົ້າຊົງສັນຍາວ່າ ຜູ້ທີ່ “ເຮັດໃນສິ່ງທີ່ຊອບທຳ” “ຈະມີອາຫານກິນ ແລະ ຈະມີນ້ຳດື່ມ.” “ເມື່ອປະຊາຊົນຂອງເຮົາຊອກນ້ຳດື່ມເພາະຫິວ ເມື່ອລຳຄໍຂອງພວກເຂົາແຫ້ງກະຫາຍຫິວນ້ຳດື່ມ; ແລ້ວເຮົາຄືອົງພຣະຜູ້ເປັນເຈົ້າຈະຕອບພວກເຂົາ ເຮົາຄືພຣະເຈົ້າແຫ່ງອິດສະຣາເອນ ຈະບໍ່ປະຖິ້ມເຂົາຈັກເທື່ອ.” (ເອຊາຢາ 33:15, 16; 41:17 LO2012). *{GC 629.2}*

ຄົນທັງຫຼາຍທີ່ຢຳເກງພຣະອົງຈະກ່າວວ່າ: “ເຖິງແມ່ນວ່າຕົ້ນໝາກເດື່ອນັ້ນບໍ່ມີໝາກກໍດີ ຕົ້ນອະງຸ່ນບໍ່ເກີດຜົນຕາມເຄືອກໍຕາມ. ເຖິງແມ່ນວ່າຕົ້ນໝາກກອກເທດບໍ່ເກີດຜົນກໍດີ ທົ່ງໄຮ່ທົ່ງນາບໍ່ຜະລິດຜົນຫຍັງກໍຕາມ. ເຖິງແມ່ນວ່າຝູງແກະນັ້ນລົ້ມຕາຍໄປຈົນໝົດກໍດີ ຄອກງົວທັງຫຼາຍເປົ່າແປນກໍຕາມ. ແຕ່ຂ້ານ້ອຍກໍຍັງຈະສືບຕໍ່ຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າ ຂ້ານ້ອຍຈະຕື່ນເຕັ້ນຍິນດີໃນພຣະເຈົ້າ ຜູ້ຊ່ວຍໃຫ້ພົ້ນຂອງຂ້ານ້ອຍ.” (ຮາບາກຸກ 3:17–18 LO2012). *{GC 629.3}*

“ພຣະເຈົ້າຢາເວຈະເຝົ້າຮັກສາເຈົ້າໄວ້ ພຣະເຈົ້າຢາເວຢູ່ຄຽງຂ້າງ ເພື່ອປົກປ້ອງເຈົ້າໄວ້. ຕາເວັນຈະບໍ່ເປັນອັນຕະລາຍແກ່ເຈົ້າໃນກາງເວັນ ດວງເດືອນກໍຈະບໍ່ເປັນອັນຕະລາຍໃນກາງຄືນ. ພຣະເຈົ້າຢາເວຈະປົກປ້ອງເຈົ້າໃຫ້ພົ້ນຈາກໂພຍໄພ ທັງຈະເຝົ້າຮັກສາເຈົ້າໃຫ້ຢູ່ຢ່າງປອດໄພໄດ້.” “ພຣະອົງຈະຮັກສາເຈົ້າໃຫ້ພົ້ນໂພຍໄພອັນລີ້ລັບ ແລະ ຈາກພະຍາດອັນຮ້າຍແຮງອັນເຖິງຕາຍ. ພຣະອົງຈະປົກຕຸ້ມເຈົ້າໄວ້ດ້ວຍປີກຂອງພຣະອົງ ແລະ ເຈົ້າຈະປອດໄພເພາະພຣະອົງຮັກສາໄວ້. ຄວາມສັດຊື່ຂອງພຣະອົງນັ້ນ ຈະປົກປ້ອງຄຸ້ມຄອງ ແລະ ທັງຈະປ້ອງກັນຮັກສາເຈົ້າໄວ້ດ້ວຍ. ເຈົ້າບໍ່ຕ້ອງຢ້ານອັນຕະລາຍໃນເວລາກາງຄືນ ຫຼື ການຫຼອນໂຈມຕີໃນເວລາກາງເວັນດ້ວຍ. ຫຼືໂຣກລະບາດທີ່ເກີດຂຶ້ນໃນເວລາມືດມົນ ຫຼື ມານຮ້າຍທີ່ຂ້າຄົນໃນເວລາກາງເວັນນັ້ນ. ອາດຈະມີພັນຄົນລົ້ມລົງ ແລະ ສິ້ນໃຈຕາຍຢູ່ຂ້າງເຈົ້າ ສິບພັນຄົນຢູ່ອ້ອມຮອບເຈົ້າ ແຕ່ເຈົ້າຈະບໍ່ຖືກທຳຮ້າຍ. ເຈົ້າຈະສັງເກດເບິ່ງດ້ວຍຕາຂອງເຈົ້າເທົ່ານັ້ນ ແລະ ເຫັນຄົນຊົ່ວຮ້າຍຖືກໂທດ.... ເຈົ້າໄດ້ຮັບເອົາພຣະເຈົ້າຢາເວເປັນຜູ້ປ້ອງກັນຂອງເຈົ້າ ຄືຮັບເອົາພຣະເຈົ້າອົງສູງສຸດ ເປັນຜູ້ຄຸ້ມຄອງເຈົ້າ. ສະນັ້ນ, ເຈົ້າຈຶ່ງບໍ່ໄດ້ປະສົບໄພພິບັດໃດໆ ແລະ ຄວາມໂຫດຮ້າຍກໍຈະບໍ່ມາໃກ້ເຮືອນເຈົ້າ.” (ເພງສັນລະເສີນ 121:5–7; 91:3–10). *{GC 629.4}*

ໃນສາຍຕາຂອງມະນຸດເບິ່ງຄືວ່າ ໄພ່ພົນຂອງພຣະເຈົ້າຈະຕ້ອງສະຫຼະຊີວິດ ເພື່ອຢືນຢັນຄວາມເຊື່ອ ເໝືອນດັ່ງຄົນທີ່ຖືກຂ້າຍ້ອນຄວາມເຊື່ອໃນອະດີດ. ພວກເຂົາເອງກໍເລີ່ມຢ້ານວ່າ ອົງພຣະຜູ້ເປັນເຈົ້າໄດ້ປະຖິ້ມພວກເຂົາໃຫ້ຕົກຢູ່ໃນກຳມືຂອງສັດຕູ; ມັນເປັນເວລາແຫ່ງຄວາມທຸກທໍລະມານໃຈທີ່ສຸດ. ພວກເຂົາຮ້ອງທັງກາງເວັນ ແລະ ກາງຄືນ ເພື່ອທູນຂໍການຊ່ວຍກູ້ຈາກພຣະເຈົ້າ. ຄົນຊົ່ວພາກັນຍິນດີ ແລະ ມີສຽງເຍາะເຍີ້ຍຮ້ອງໃສ່ວ່າ: “ຄວາມເຊື່ອຂອງພວກເຈົ້າຢູ່ໃສແລ້ວ? ຖ້າພວກເຈົ້າເປັນຄົນຂອງພຣະເຈົ້າແທ້ ເປັນຫຍັງພຣະອົງຈຶ່ງບໍ່ຊ່ວຍພວກເຈົ້າໃຫ້ພົ້ນຈາກມືຂອງພວກເຮົາ?” ແຕ່ບັນດາຜູ້ທີ່ລໍຖ້າຢູ່ນັ້ນ ຈະລະນຶກເຖິງພຣະເຢຊູ ເມື່ອພຣະອົງສິ້ນພຣະຊົນເທິງໄມ້ກາງແຂນແຫ່ງພູເຂົາຄານວາຣີ. ໃນຄາວນັ້ນ, ພວກມະຫາປະໂຣຫິດກັບພວກຜູ້ປົກຄອງເຍາะເຍີ້ຍຮ້ອງໃສ່ວ່າ: “ລາວຊ່ວຍຄົນອື່ນໃຫ້ພົ້ນໄດ້ ແຕ່ລາວບໍ່ສາມາດຊ່ວຍຕົນເອງໄດ້! ລາວເປັນກະສັດຂອງຊາວອິດສະຣາເອນ! ໃຫ້ລາວລົງມາຈາກໄມ້ກາງແຂນດຽວນີ້ ແລ້ວພວກເຮົາຈະເຊື່ອໃນລາວ.” (ມັດທາຍ 27:42 LCV). ຄືກັນກັບຢາໂຄບທີ່ປ້ຳສູ້ກັບພຣະເຈົ້າ, ທຸກຄົນກຳລັງອ້ອນວອນດ້ວຍຄວາມດື້ນຮົນຕໍ່ພຣະອົງ. ໃບໜ້າຂອງທຸກຄົນຊີດຂາວ ສະແດງເຖິງການຕໍ່ສູ້ໃນໃຈ. ເຖິງຢ່າງນັ້ນ, ພວກເຂົາກໍບໍ່ຢຸດການອ້ອນວອນທູນຂໍດ້ວຍຄວາມຈິງໃຈ. *{GC 630.1}*

ຖ້າມະນຸດສາມາດເຫັນເໝືອນດັ່ງທີ່ຊາວສະຫວັນເຫັນນັ້ນ, ພວກເຂົາຈະເຫັນກອງທັບທູດສະຫວັນອັນເຂັ້ມແຂງ ປะຈຳການຢູ່ອ້ອມຮອບຜູ້ທີ່ຮັກສາຄຳສັ່ງຂອງພຣະຄຣິສໄວ້ດ້ວຍຄວາມພາກພຽນອົດທົນ. ທູດສະຫວັນມີຄວາມເຫັນອົກເຫັນໃຈ ໃນຂະນະທີ່ເຫັນຄວາມທຸກໃຈ ແລະ ໄດ້ຍິນຄຳອະທິຖານຂອງພວກເຂົາ. ເຫຼົ່າທູດສະຫວັນລໍຖ້າຄຳສັ່ງຈາກຜູ້ບັນຊາການ ເພື່ອໄປຊ່ວຍໄພ່ພົນຂອງພຣະເຈົ້າອອກຈາກອັນຕະລາຍ. ແຕ່ພວກເຂົາຕ້ອງລໍຖ້າຕໍ່ໄປອີກໜ້ອຍໜຶ່ງ ເພາะໄພ່ພົນຂອງພຣະເຈົ້າຕ້ອງດື່ມຈາກຈອກນັ້ນ ແລະ ຮັບບັບຕິສະມາຕາມທີ່ກຳນົດໄວ້. (ເບິ່ງ ມັດທາຍ 20:22–23). ການລໍຖ້າທີ່ສ້າງຄວາມເຈັບປວດນັ້ນ ກັບກາຍເປັນຄຳຕອບທີ່ດີທີ່ສຸດສຳລັບຄຳອະທິຖານຂອງພວກເຂົາ. ໃນຂະນະທີ່ພວກເຂົາພะຍາຍາມລໍຖ້າພຣະເຈົ້າດ້ວຍຄວາມໄວ້ວາງໃຈ, ພວກເຂົາກໍຕ້ອງຝຶກຝົນຄວາມເຊື່ອ, ຄວາມຫວັງ ແລະ ຄວາມອົດທົນ ເຊິ່ງເປັນສິ່ງທີ່ພວກເຂົາບໍ່ຄ່ອຍໄດ້ນຳໃຊ້ໃນຊີວິດຄຣິສຕຽນທີ່ຜ່ານມາ. ເຖິງຢ່າງໃດກໍຕາມ, ເພື່ອເຫັນແກ່ຜູ້ທີ່ພຣະເຈົ້າຊົງເລືອກ, ເວລາແຫ່ງຄວາມທຸກຍາກລຳบากນັ້ນຈະສັ້ນລົງ. “ແລ້ວພຣະເຈົ້າຈະບໍ່ໃຫ້ຄວາມຍຸຕິທຳແກ່ຜູ້ທີ່ພຣະອົງເລືອກໄວ້ ຜູ້ທີ່ຮ້ອງຂໍພຣະອົງທັງກາງເວັນ ແລະ ກາງຄືນບໍ? . . . ເຮົາບອກພວກເຈົ້າທັງຫຼາຍວ່າ, ພຣະອົງຈະໃຫ້ພວກເຂົາໄດ້ຮັບຄວາມຍຸຕິທຳໂດຍໄວ.” (ລູກາ 18:7, 8 LCV). ຈຸດຈົບຈະມາເຖິງໄວກວ່າທີ່ມະນຸດຄາดຄິดໄວ້. ເຂົ້າດີນັ້ນຈະຖືກເກັບກ່ຽວ ແລະ ມັດຮວມກັນໄວ້ໃນສາງຂອງພຣະເຈົ້າ; ສ່ວນເຂົ້ານົກຈະຖືກມັດຮວມກັນເພື່ອເຜົາທຳลาย. *{GC 630.2}*

ເຫຼົ່າທູດສະຫວັນເຝົ້າຍາມດ້ວຍຄວາມສັດຊື່ຕໍ່ໜ້າທີ່ອັນສັກสิดนັ້ນ. ເຖິງแม่ນວ່າ ຈะมีการกำนົดเวลาໃຫ້ประชาชนผู้ที่ถือรักสาพระบัญญัติกำตาม, แต่สัตตูของพวกเขาในบางแห่งกำจะบໍ่ลໍถ้าคำสั่งนั้น และ จะพะยายามเอาชีวิตพวกเขาก่อนเวลาที่กำนົด. ຢ່າງໃດກໍຕາມ, ບໍ່ມີຜູ້ໃດสามาดผ่านเหล่าทูดสะหวันที่เฝ้ายามอยู่อ้อมรอบทุกคนที่สัดซื่. คนของพระเจ้าบางคนถูกโจมตีในขะนะที่หนีออกจากบ้าน และ เมือง; แต่ดาบที่ยกขึ้นต่สู้พวกเขากำหัก และ ตกลงเหมือนเป็นพุงเฟืองเส้นหนึ่ง. คนอื่น ๆ ได้รับการปกป้องจากเหล่าทูดสะหวันที่ปากกดในลักสะนะของทะหาน. *{GC 631.1}*

ໃນທຸກຍຸກທຸກสะไหม พระเจ้าชงใช้ทูดสะหวันบໍริสุดเพื่อคุ้มคอง และ ช่วยกู้คนของพระองค์. ทูดสะหวันได้มีส่วนร่วมในกิดจะการของมะนุด, บางคั้งปากกดตัวใส่เคื่องที่เคลื่อม

ແສງດັ່ງຟ້າແມບ ແລະ ບາງຄັ້ງກໍມາໃນສະພາບຄົນທຳມະດາທີ່ກຳລັງເດີນທາງ. ເມື່ອປາກົດຕໍ່ຕໍ່ ຄົນຂອງພຣະເຈົ້າ ທູດສະຫວັນມັກມາໃນຮູບຮ່າງມະນຸດ; ບາງຄັ້ງກໍນັ່ງພັກເຊົາຢູ່ໃຕ້ຮົ່ມຕົ້ນໄມ້ໃນຕອນ ທ່ຽງເໝືອນຄົນອິດເມື່ອຍ ແລະ ຍອມຮັບການຕ້ອນຮັບເຂົ້າພັກເຊົາໃນເຮືອນຂອງມະນຸດ. ທູດສະຫວັນ ເຄີຍນຳທາງຜູ້ທີ່ຫຼົງທາງ ແລະ ຈູດໄຟທີ່ແທ່ນບູຊາດ້ວຍມືຂອງຕົນເອງ ທັງໄດ້ເປີດປະຕູຄຸກ ເພື່ອ ປົດປ່ອຍຜູ້ຮັບໃຊ້ຂອງພຣະເຈົ້າ. ນອກຈາກນັ້ນ, ທູດສະຫວັນທີ່ສອມເຄື່ອງອາວຸດຈາກສະຫວັນ ໄດ້ ມາກີ້ງກ້ອນຫີນອອກຈາກອຸບມຸງຝັ່ງພຣະສົບຂອງພຣະຜູ້ຊ່ວຍໃຫ້ລອດ. *{GC 631.2}*

ທູດສະຫວັນໃນຮູບຮ່າງຂອງມະນຸດ ມັກເຂົ້າຮ່ວມໃນທີ່ປະຊຸມຂອງຄົນຊອບທຳ ແລະ ເຂົ້າສັງເກດໃນທີ່ ຊຸມນຸມຂອງຄົນຊົ່ວ ເໝືອນດັ່ງທີ່ເຄີຍໄປເມືອງໂຊໂດມ ເພື່ອບັນທຶກການກະທຳຂອງພວກເຂົາ ແລະ ເພື່ອ ເບິ່ງວ່າພວກເຂົາລ່ວງເກີນຂອບເຂດຄວາມອົດກັ້ນຂອງພຣະເຈົ້າຫຼືບໍ່. ອົງພຣະຜູ້ເປັນເຈົ້າຊົງຍິນດີໃນການ ສະແດງຄວາມເມດຕາ ແລະ ເພື່ອເຫັນແກ່ຄົນສ່ວນໜ້ອຍທີ່ຮັບໃຊ້ພຣະອົງດ້ວຍໃຈຈິງ ພຣະອົງຈຶ່ງ ຍັບຍັ້ງໄພພິບັດ ແລະ ຊົງຍືດເວລາແຫ່ງຄວາມສະຫງົບສຸກໃຫ້ແກ່ຄົນຈຳນວນຫຼາຍ. ຄົນບາບທີ່ ຕໍ່ຕ້ານພຣະເຈົ້າບໍ່ຮູ້ຈັກວ່າ ພວກເຂົາມີຊີວິດຢູ່ໄດ້ຍ້ອນຄົນສ່ວນໜ້ອຍທີ່ສັດຊື່ ຄືຄົນທີ່ພວກເຂົາມັກ ເຍາะເຍີ້ຍ ແລະ ຂົ່ມເຫັງນັ້ນເອງ. *{GC 631.3}*

ເຖິງແມ່ນວ່າ ບັນດາຜູ້ປົກຄອງໃນໂລກນີ້ບໍ່ຮູ້ກໍຕາມ, ແຕ່ເຫຼົ່າທູດສະຫວັນເຄີຍເຂົ້າຮ່ວມ ແລະ ລຸກ ຂຶ້ນກ່າວໃນການປະຊຸມຂອງພວກເຂົາຢູ່ເລື້ອຍ ໆ. ມະນຸດໄດ້ເຫັນພວກເພິ່ນດ້ວຍຕາ, ໄດ້ຍິນຄຳວິງວອນ ຂອງພວກເພິ່ນດ້ວຍຫູຂອງຕົນເອງ, ປາກຂອງຜູ້ຄົນກໍໄດ້ຄັດຄ້ານຄຳແນะນຳ ແລະ ເຍาะເຍີ້ຍຄຳ ປົກສາຂອງເຫຼົ່າທູດສະຫວັນເຫຼົ່ານັ້ນ ແລະ ມືກໍໄດ້ສະແດງຄວາມໝິ່ນປะໝาດ ແລະ ເຮັດທາລຸນ ຕໍ່ພວກເພິ່ນ. ເມື່ອຢູ່ໃນຫ້ອງປะຊຸມ ແລະ ສານຍຸຕິທຳ, ທູດສະຫວັນເຫຼົ່ານີ້ໄດ້ສະແດງເຖິງຄວາມ ຮູ້ໃນປะຫວັດສาດມะນຸດຢ່າງເລິກເຊິ່ງ ແລະ ສามาดປົກປ້ອງຜູ້ທີ່ຖືກຂົ່ມເຫັງໄດ້ດີກວ່າທะນาย ຄວามທີ່ເກັ່ງ ແລະ ມີວาทะสินທີ່ສຸດເสยอีก. ພวกเพิ่นได้ขอ้ำแผนการชั่วร้ายที่จะเธ็ดใต้ วุกวานของพระเจ้าชักช้า ແລະ ຈะสร้างความทุกทໍละมานใต้แก่ไพ่พົนของพระอ้ง. ในยาม ອันตะลาย ແລະ ทุกยากลำบาก "ทูดของพระเยโธอา กำตั้งยู่อ้อมธอบคนทั้งหายที่ย้านยำ พระอ้ง ແລະ ช่วยเขาใต้พ้น." (เพงสับละเสิน 34:7 สะบับลาอบูธาน). *{GC 632.1}*

ไพ่พົนของพระเจ้าลໍคอยหมายสำคับแต่วงการสะเด็ดมาของพระธาชาของพวกเขาด้วย ความปาถะหนาอันแธงก้า. เมื่อมีผู้มาถามคนที่เฝ้าลໍเห้านี้ว่า, "เห้งปานใดจะแจ้ง?" พวกเขา ตอบด้วยความหั้นใจว่า, "รุ่งเช้ากำลังมาเถิง ແລะ กางคืนกำตามมาด้วย." (เอซายา 21:11, 12 TH1940). แสงสะหว่างกำลังสาดส่องยู่เหิงก้อนเมกเหือจอมพู; อีกบໍ่ดົນ รัดสะหีพาบของพระอ้งกำจะปากົดใต้เห็น; ดวงตาเอ็นแต่วงความชอบทำกำลังจะส่องแสง ออกมา. ยามเช้า ແລะ กางคืนกำลังจะมาเถิง, จะเป็นการเล่ิมต้นของอันที่บໍ่มีการสิ้นสุด สำลับคนชอบทำ, แต่ความมืดจะปกคุมคนอะทำไปตะหอดกาน. *{GC 632.2}*

ในขะนะที่กุ่มผู้อะทิถานด้วยความมุ่งหั้นกำลังทูนขໍต่พระเจ้ายู่นั้น, เบิ่งคือว่าผ้ากั้ง ละหว่างโลกที่เบิ่งเห็น ແລะ โลกที่เบิ่งบໍ่เห็นถืกเปิดออก. ท้องฟ้าส่องแสงอาลุนของอันที่จะ บໍ่มีการสิ้นสุด, มีถ้อยคำดังก้องเข้าหู เหือนสุงเพงอันไพเลาะของเหล่าทูดสะหวันว่า: "จ่ง ยึดหั้นในถวามจ่งรักพักดี. ถวามช่วยเหลือกำลังจะมาเถิง." พระถริสผู้พิชิดอันยิ่งใหย่ ชัง ยืนมังกุดแต่วชีวิดอันบໍ่รู้จักตาย ใต้แก่ทะหานผู้อิดเมื่อยของพระอ้ง; สุงของพระอ้งดังมา จากปะตูที่เปิดแง้มว่า: "เบิ่งแม, เธาอยู่กับพวกเจ้า. ย่าซู่ย้าน. เธารู้จักถวามทุกยากหักหายของพวกเจ้า; เธาได้แบกธับถวามโสกเสิ้าของพวกเจ้าไอ้แล้ว. พวกเจ้าสู้ธบกับสัดตูที่เธาได้

ທົດສອບກຳລັງແລ້ວ. ເຮົາໄດ້ຕໍ່ສູ້ແທນພວກເຈົ້າ ແລະ ໃນນາມຂອງເຮົາ ພວກເຈົ້າມີໄຊຊະນະຍິ່ງກວ່າ ຜູ້ພິຊິດ." {GC 632.3}

ຄວາມຊ່ວຍເຫຼືອມາທັນເວລາ

ພຣະຜູ້ຊ່ວຍໃຫ້ລອດຜູ້ປະເສີດ ຈະປະທານຄວາມຊ່ວຍເຫຼືອມາໃນຍາມທີ່ພວກເຮົາຕ້ອງການພໍດີ. ທາງໄປສູ່ສະຫວັນໄດ້ຮັບການຊຳລະໃຫ້ບໍຣິສຸດ ດ້ວຍຮອຍພຣະບາດຂອງພຣະອົງ. ຂວາກໜາມທຸກອັນທີ່ແທງຕີນຂອງພວກເຮົານັ້ນ ໄດ້ແທງພຣະອົງມາກ່ອນແລ້ວ; ໄມ້ກາງແຂນທີ່ພວກເຮົາຕ້ອງແບກນັ້ນ ພຣະອົງກໍໄດ້ແບກກ່ອນໜ້າພວກເຮົາແລ້ວ. ພຣະອົງຊົງອະນຸຍາດໃຫ້ມີການຕໍ່ສູ້ ເພື່ອກຽມຈິດວິນຍານໃຫ້ພ້ອມສຳລັບຄວາມສະຫງົບສັນຕິ. ເຖິງແມ່ນວ່າ ເວລາແຫ່ງຄວາມທຸກຍາກລຳບາກນັ້ນ ເປັນເວລາແຫ່ງການທົດສອບທີ່ໜ້າຢ້ານກົວສຳລັບໄພ່ພົນຂອງພຣະເຈົ້າ, ແຕ່ມັນກໍເປັນເວລາທີ່ຜູ້ເຊື່ອແທ້ທຸກຄົນຈະເງີຍໜ້າຂຶ້ນເບິ່ງ ແລະ ດ້ວຍຄວາມເຊື່ອ ເຂົາຈະເຫັນສາຍຮຸ້ງແຫ່ງພັນທະສັນຍາອ້ອມຮອບຕົນຢູ່. {GC 633.1}

"ພວກທີ່ພຣະເຈົ້າຢາເວໄດ້ຊ່ວຍກູ້ ກໍເຖິງນະຄອນເຢຣູຊາເລັມ ເປີກບານໃຈທັງຮ້ອງລຳທຳເພງດ້ວຍ. ພວກເຂົາຈະມີຄວາມສຸກຕະຫຼອດໄປ ຈະບໍ່ໂສກເສົ້າເຫງົ້າໃຈອີກຈັກເທື່ອ. ອົງພຣະຜູ້ເປັນເຈົ້າກ່າວວ່າ, 'ເຮົາຄືຜູ້ທີ່ເຮັດໃຫ້ພວກເຈົ້າໄດ້ກຳລັງເຂັ້ມແຂງຂຶ້ນໃໝ່. ເປັນຫຍັງພວກເຈົ້າຈຶ່ງຢ້ານມະນຸດທີ່ຕາຍເປັນ ພວກທີ່ບໍ່ຍືນຍົງລົ້ນຕົ້ນຫຍ້າ? ພວກເຈົ້າລືມໄລພຣະເຈົ້າຢາເວຜູ້ສ້າງເຈົ້າແລ້ວບໍ? . . . ເປັນຫຍັງພວກເຈົ້າຈຶ່ງ . . . ຢ້ານພວກທີ່ກົດຂີ່ພວກເຈົ້າຢ່າງໂຫດຮ້າຍ ຄືພວກທີ່ພ້ອມຈະທຳລາຍພວກເຈົ້າທຸກເວລາ? ຄວາມໂຫດຮ້າຍຂອງພວກເຂົາແຕະຕ້ອງພວກເຈົ້າບໍ່ໄດ້. ພວກຊະເລີຍເສິກນັ້ນ ຈະຖືກປ່ອຍໃຫ້ເປັນເສລີ ພວກເຂົາຈະບໍ່ສິ້ນຊີວິດຢູ່ໃນຄຸກມືດ ແຕ່ພວກເຂົາຈະມີຊີວິດຍືນຍາວກ້າວໄປໄກສະເໝີ ແລະ ມີເຂົ້າຈີ່ຕາມທີ່ພວກເຂົາຕ້ອງການ. ເຮົາຄືພຣະເຈົ້າຢາເວ ພຣະເຈົ້າຂອງເຈົ້າ, ເຮົາປຸກປັ່ນທະເລໃຫ້ມັນຄຶກຄະນອງຂຶ້ນ ແລະ ເຮັດໃຫ້ສຽງຄື້ນດັງກ້ອງສະໜັ່ນຫວັ່ນໄຫວ ນາມເຮົາຄືພຣະເຈົ້າຢາເວອົງຊົງຣິດອຳນາດຍິ່ງໃຫຍ່ . . . ເຈົ້າເປັນປະຊາຊົນທີ່ເຮົາປົກປ້ອງຄຸ້ມຄອງໄວ້ ເຮົາມອບຄຳສັ່ງສອນໃຫ້ເຈົ້າຮັກສາໄວ້.'" (ເອຊາຢາ 51:11–16). {GC 633.2}

"ສະນັ້ນ, ເຈົ້າຜູ້ຖືກຂົ່ມໃຈ ຜູ້ມຶນເມົາແຕ່ບໍ່ແມ່ນດ້ວຍເຫຼົ້າອະງຸ່ນ ຈົ່ງຟັງຂໍ້ນີ້ເຖີດ. ອົງພຣະຜູ້ເປັນເຈົ້າຂອງເຈົ້າ ພຣະເຢໂຮວາພຣະເຈົ້າຂອງເຈົ້າ ຜູ້ຊົງສູ້ຄະດີແຫ່ງຊົນຊາດຂອງພຣະອົງ ຊົງກ່າວດັ່ງນີ້ວ່າ 'ເບິ່ງແມ! ເຮົາໄດ້ເອົາຈອກແຫ່ງຄວາມໂຊເຊມາຈາກມືຂອງເຈົ້າ ແລ້ວຕະກອນໃນຈອກແຫ່ງຄວາມພິໂຣດຂອງເຮົາ ເຈົ້າຈະບໍ່ຕ້ອງດື່ມອີກ. ແຕ່ເຮົາຈະໃສ່ມັນໄວ້ໃນມືຂອງຜູ້ທໍລະມານເຈົ້າ ຜູ້ໄດ້ເວົ້າກັບຈິດໃຈເຈົ້າວ່າ 'ກົ້ມລົງ ເຮົາຈະໄດ້ຂ້າມໄປ' ແລະ ເຈົ້າໄດ້ເຮັດໃຫ້ຫຼັງຂອງເຈົ້າເໝືອນພື້ນດິນ ແລະ ເໝືອນຖະໜົນເພື່ອໃຫ້ເຂົາຂ້າມໄປ.'" (ເອຊາຢາ 51:21–23 ດັດແປງຈາກສະບັບ TKJV). {GC 633.3}

ພຣະເຈົ້າຊົງເບິ່ງຄົນຂອງພຣະອົງລ່ວງໜ້າ ແລະ ເຫັນວິກິດການໃນຍຸກສຸດທ້າຍ ເມື່ອອຳນາດຂອງໂລກຈະລຸກຮືຂຶ້ນຕໍ່ສູ້ກັບພວກເຂົາ. ໄພ່ພົນຂອງພຣະເຈົ້າຈະປະເຊີນກັບສະຖານະການທີ່ສ່ຽງຕໍ່ການອຶດຕາຍ ຫຼື ການຖືກຂ້າຕາຍຢ່າງຮຸນແຮງ ເໝືອນດັ່ງຜູ້ຖືກເມລະເທດເປັນຊະເລີຍໃນສະໄໝກ່ອນ. ແຕ່ພຣະເຈົ້າອົງບໍຣິສຸດ ຜູ້ທີ່ໄດ້ແຍກທະເລແດງຕໍ່ໜ້າຊາວອິດສະຣາເອນ ຈະສຳແດງຣິດອຳນາດອັນຍິ່ງໃຫຍ່ຂອງພຣະອົງ ແລະ ຈະປົດປ່ອຍພວກເຂົາໃຫ້ເປັນອິດສະຫຼະ. "ອົງພຣະຜູ້ເປັນເຈົ້າອົງຊົງຣິດອຳນາດຍິ່ງໃຫຍ່ກ່າວວ່າ, 'ພວກເຂົາຈະເປັນປະຊາຊົນຂອງເຮົາ. ໃນມື້ທີ່ເຮົາດຳເນີນການນັ້ນ ພວກເຂົາຈະເປັນກຳມະສິດຂອງເຮົາແທ້ໆ. ເຮົາຈະເມດຕາພວກເຂົາດັ່ງພໍ່ເມດຕາລູກຜູ້ທີ່ຮັບໃຊ້ຕົນ.'" (ມາລາກີ 3:17 LO2012). ຖ້າໃນເວລານັ້ນພະຍານທີ່ສັດຊື່ຂອງພຣະຄຣິສຖືກຂ້າຕາຍ, ກໍຈະບໍ່ເປັນການຫວ່ານ

ເມັດພືດເພື່ອຫວັງຜົນເກັບກ່ຽວ ເໝືອນຄົນຂອງພຣະເຈົ້າທີ່ຖືກຂ້າຕາຍໃນສະໄໝກ່ອນ. ຄວາມສັດຊື່ ຂອງພວກເຂົາຈະບໍ່ເຮັດໃຫ້ຄົນອື່ນຮັບເຊື່ອໃນຄວາມຈິງ ເພາະຜູ້ຄົນທີ່ມີຈິດໃຈແຂງກະດ້າງໄດ້ປະຕິເສດ ພຣະເມດຕາຢ່າງຕໍ່ເນື່ອງ ຈົນບໍ່ມີພຣະເມດຕາສຳລັບພວກເຂົາແລ້ວ. ຖ້າໃນຕອນນີ້ ຄົນຊອບທຳຖືກປະ ໃຫ້ຕົກເປັນເຫຍື່ອຂອງສັດຕູ ກໍຈະເປັນໄຊຊະນະຂອງຊາຕານ. ຜູ້ປະພັນເພງສັນລະເສີນໄດ້ກ່າວວ່າ: "ໃນ ຍາມຍາກລຳບາກ ພຣະອົງຈະເປັນຮົ່ມໃຫ້ຂ້ານ້ອຍ ພຣະອົງຈະຮັກສາຂ້ານ້ອຍໄວ້ ຢູ່ໃນພຣະວິຫານ ຂອງພຣະອົງ." (ເພງສັນລະເສີນ 27:5). ພຣະຄຣິສຊົງກ່າວວ່າ: "ປະຊາຊົນຂອງເຮົາເອີຍ ຈົ່ງເມືອ ເຮືອນຂອງພວກເຈົ້າ ແລະ ອັດປະຕູໄວ້ສາ. ຈົ່ງຊ່ອນຕົວພວກເຈົ້າໄວ້ຊົ່ວໄລຍະໜຶ່ງ ຈົນກວ່າພຣະເຈົ້າ ເຊົ້າໂກດຮ້າຍ. ພຣະເຈົ້າຢາເວກຳລັງມາແຕ່ບ່ອນທີ່ພຣະອົງສະຖິດຢູ່ ເພື່ອລົງໂທດປະຊາກອນໃນໂລກ ນີ້ ເພາະບາບທີ່ພວກເຂົາໄດ້ເຮັດ." (ເອຊາຢາ 26:20, 21). ການຊ່ວຍກູ້ຂອງບັນດາຜູ້ທີ່ອົດທົນລໍຖ້າ ການສະເດັດມາຂອງພຣະອົງ ແລະ ມີຊື່ຂຽນໄວ້ໃນໜັງສືແຫ່ງຊີວິດນັ້ນ ຈະເຕັມໄປດ້ວຍຣັດສະໝີພາບ ອັນຍິ່ງໃຫຍ່. *{GC 634.1}*



ບໍ່ດົນກໍມີເມກດຳນ້ອຍ ໆ ກ້ອນໜຶ່ງປາກົດທາງທິດຕາເວັນອອກ, ມີຂະໜາດປະມານເຄິ່ງຝ່າມື ຄົນ. ມັນຄືເມກອ້ອມຮອບພຣະຜູ້ຊ່ວຍໃຫ້ລອດ ເຊິ່ງເບິ່ງແຕ່ໄກເໝືອນກັບວ່າພຣະອົງຖືກ ຫໍ່ຫຸ້ມດ້ວຍຄວາມມືດ. ໄພ່ພົນຂອງພຣະເຈົ້າຮູ້ວ່າ ນີ້ແມ່ນໝາຍສຳຄັນແຫ່ງບຸດມະນຸດ.

ເບິ່ງໜ້າ 517.

Image generated with AI (Google Gemini).

40

ພຣະເຈົ້າຊົງກອບກູ້ຄົນຂອງພຣະອົງ

ແຜນການທຳລາຍຄົນຂອງພຣະເຈົ້າ

ເມື່ອກົດໝາຍບ້ານເມືອງ ບໍ່ປົກປ້ອງຜູ້ທີ່ຮັກສາພຣະບັນຍັດຂອງພຣະເຈົ້າອີກຕໍ່ໄປ, ຈະມີຂະບວນ-ການທຳລາຍພວກເຂົາເກີດຂຶ້ນພ້ອມກັນໃນຫຼາຍປະເທດ. ເມື່ອເວລາທີ່ກຳນົດໄວ້ໃກ້ເຂົ້າມາ, ປະຊາຊົນຈະສົມຮູ້ຮ່ວມຄິດກັນ ເພື່ອກຳຈັດກຸ່ມຄົນທີ່ພວກເຂົາກຽດຊັງ. ພວກເຂົາຈະຕັດສິນໃຈໂຈມຕີໃນຄືນດຽວ ເພື່ອໃຫ້ຜູ້ທີ່ຄັດຄ້ານ ແລະ ຕັກເຕືອນພວກເຂົາຖືກປິດປາກໄປຕະຫຼອດການ. *{GC 635.1}*

ໄພ່ພົນຂອງພຣະເຈົ້າຈຳນວນໜຶ່ງຖືກຂັງຢູ່ໃນຄຸກ, ບາງຄົນໄດ້ລີ້ຢູ່ບ່ອນຫ່າງໄກໃນປ່າ ແລະ ເທິງພູ. ພວກເຂົາຍັງຄົງອ້ອນວອນຂໍການຄຸ້ມຄອງຈາກພຣະເຈົ້າ, ໃນຂະນະທີ່ກຸ່ມຄົນຖືອາວຸດທີ່ຖືກຊຸກຍູ້ໂດຍເຫຼົ້າຜີມານຮ້າຍ ກຳລັງກຽມການເຂັ່ນຂ້າໃນທຸກແຫ່ງຫົນ. ໃນຍາມຄັບຂັນທີ່ສຸດນີ້ເອງ, ພຣະເຈົ້າຂອງຊົນຊາດອິດສະຣາເອນ ຈະຊົງຊ່ວຍກູ້ໄພ່ພົນທີ່ພຣະອົງຊົງເລືອກໄວ້. ພຣະຜູ້ເປັນເຈົ້າຊົງກ່າວວ່າ: “ພວກເຈົ້າຜູ້ທີ່ເປັນປະຊາຊົນຂອງພຣະເຈົ້າ ຈະຊົມຊື່ນຍິນດີ ແລະ ຮ້ອງເພງດັ່ງໃນຕອນກາງຄືນທີ່ພວກເຈົ້າກິນລ້ຽງອັນບໍຣິສຸດ. ພວກເຈົ້າຈະມີຄວາມຊົມຊື່ນຍິນດີ ດັ່ງຄົນທີ່ຍ່າງໄປກັບສຽງດົນຕີ . . . ໄປສູ່ພູເຂົາຂອງພຣະເຈົ້າຢາເວ ສູ່ສິລາຂອງຊາດອິດສະຣາເອນ. ແລະພຣະເຈົ້າຢາເວຈະໃຫ້ທຸກຄົນໄດ້ຍິນສຽງອັນຊົງຣິດອຳນາດຂອງພຣະອົງ ແລະ ຊີ້ນຣິດແຫ່ງຄວາມໂກດຮ້າຍຂອງພຣະອົງ. ມັນຈະມີແປວໄຟ, ພະຍຸຝົນ, ໝາກເຫັບ ແລະ ຫ່າຝົນຮ່ຳລົງມາ.” (ເອຊາຢາ 30:29–30). *{GC 635.2}*

ຝູງຊົນຄົນຊົ່ວກຳລັງຈະພຸ່ງເຂົ້າໃສ່ເຫຍື່ອຂອງພວກເຂົາ ພ້ອມທັງໂຮ່ຮ້ອງດ້ວຍຄວາມຄາດຫວັງໃນໄຊຊະນະ ມີສຽງການເຍາะເຍີ້ຍ ແລະ ການປ້ອຍດ່າ. ແຕ່ທັນໃດນັ້ນ ຄວາມມືດອັນໜາທຶບກວ່າຄວາມມືດຂອງຍາມກາງຄືນກຳລົງມາປົກຄຸມທົ່ວແຜ່ນດິນ. ຈາກນັ້ນ, ສາຍຮຸ້ງກໍປາກົດຂຶ້ນ ເຊິ່ງສ່ອງແສງດ້ວຍຣັດສະໝີພາບຈາກບັນລັງຂອງພຣະເຈົ້າ ພາດຜ່ານທົ່ວທ້ອງຟ້າ ແລະ ອ້ອມຮອບແຕ່ລະກຸ່ມທີ່ກຳລັງອະທິຖານຢູ່ນັ້ນ. ຝູງຊົນທີ່ຄຶງດແຄ້ນກໍຢຸດຊະງັກໃນທັນທີ. ສຽງເຍາะເຍີ້ຍຂອງພວກເຂົາກໍມິດງຽບລົງ. ພວກເຂົາລືມຄົນທີ່ຕົນຕັ້ງໃຈຈະຂ້າດ້ວຍຄວາມໂຫດຮ້າຍ ແລ້ວກໍໜ້ຽວເບິ່ງເຄື່ອງໝາຍແຫ່ງພັນທະສັນຍາຂອງພຣະເຈົ້າດ້ວຍຄວາມຢ້ານກົວວ່າຈະເກີດຫຍັງຂຶ້ນ ແລະ ປາຖະໜາທີ່ຈະຫຼົບລີ້ຈາກແສງອັນເຈີດຈ້າຂອງສາຍຮຸ້ງນັ້ນ. *{GC 635.3}*

ໄພ່ພົນຂອງພຣະເຈົ້າໄດ້ຍິນສຽງອັນໄພເລาะແຈ່ມແຈ້ງກ່າວວ່າ “ຈົ່ງເງີຍໜ້າຂຶ້ນ.” ເມື່ອພວກເຂົາໜ້ຽວເບິ່ງທ້ອງຟ້າ ກໍເຫັນສາຍຮຸ້ງແຫ່ງພັນທະສັນຍາ. ເມກດຳອັນໜ້າຢ້ານທີ່ປົກຄຸມທ້ອງຟ້າໄດ້ແຍກອອກ ແລະ ຄືກັນກັບຊະເຕຟາໂນ ພວກເຂົາເຫັນສະຫວັນ ແລະ ສະຫງ່າຣາສີຂອງພຣະເຈົ້າ ພ້ອມທັງບຸດມະນຸດປะທັບເທິງບັນລັງຂອງພຣະອົງ. ພວກເຂົາເຫັນຮອຍແຜຂອງພຣະເຢຊູ ແລະ ໄດ້ຍິນພຣະອົງທູນຂໍຕໍ່ພຣะບິດາ ຕໍ່ໜ້າບັນດາທູດສະຫວັນຜູ້ບໍຣິສຸດວ່າ: “ພຣะບິດາເຈົ້າເອີຍ, ຂ້ານ້ອຍ

ປາຖະໜາໃຫ້ບັນດາຜູ້ທີ່ພຣະອົງໄດ້ມອບໃຫ້ແກ່ຂ້ານ້ອຍນັ້ນ ໄດ້ຢູ່ກັບຂ້ານ້ອຍໃນບ່ອນທີ່ຂ້ານ້ອຍຢູ່." (ໂຢຮັນ 17:24 LCV). ຈາກນັ້ນ, ກໍມີສຽງອັນໄພເລາະແຫ່ງໄຊຊະນະດັງຂຶ້ນອີກວ່າ: "ພວກເຂົາມາແລ້ວ! ພວກເຂົາມາແລ້ວ! ບັນດາຜູ້ບໍຣິສຸດ, ບໍ່ມີຕຳໜິ ແລະ ບໍ່ມີມົນທິນ. ພວກເຂົາໄດ້ຮັກສາຄຳຂອງເຮົາດ້ວຍຄວາມອົດທົນພາກພຽນ; ຈາກນີ້ໄປ, ພວກເຂົາຈະໄດ້ດຳເນີນຊີວິດຢູ່ທ່າມກາງເຫຼົ່າທູດສະຫວັນ." ແລ້ວປາກອັນຊີດຂາວທີ່ສັ່ນເຊັນຂອງບັນດາຜູ້ທີ່ໄດ້ຢຶດໝັ້ນໃນຄວາມເຊື່ອ ຈະໂຮ່ຮ້ອງຂຶ້ນດ້ວຍໄຊຊະນະ. *{GC 636.1}*

ຄົນຂອງພຣະເຈົ້າໄດ້ຮັບອິດສະຫຼະ

ໃນຍາມທ່ຽງຄືນນັ້ນ, ພຣະເຈົ້າຊົງສຳແດງຣິດອຳນາດ ເພື່ອຊ່ວຍໄພ່ພົນຂອງພຣະອົງໃຫ້ພົ້ນ. ດວງຕາເວັນປາກົດຂຶ້ນ ສ່ອງແສງຢ່າງຮຸ່ງເຮືອງ. ໝາຍສຳຄັນ ແລະ ການອັດສະຈັນເກີດຂຶ້ນຢ່າງຕໍ່ເນື່ອງບໍ່ຂາດສາຍ. ຄົນຊົ່ວຕົກຕະລຶງ ແລະ ເບິ່ງເຫດການນີ້ດ້ວຍຄວາມຢ້ານກົວ; ສ່ວນຄົນຊອບທຳກໍມີຄວາມຊົມຊື່ນຍິນດີ ເມື່ອເຫັນໝາຍສຳຄັນແຫ່ງການຊ່ວຍກູ້ຂອງພວກເຂົາ. ທຸກສິ່ງໃນທຳມະຊາດເບິ່ງຄືວ່າຜິດປົກກະຕິໄປໝົດ; ສາຍນ້ຳທັ້ງຫຼາຍຢຸດໄຫຼ; ເມກດຳອັນໜາທຶບກະທົບກັນ. ທ່າມກາງທ້ອງຟ້າທີ່ປັ່ນປ່ວນນັ້ນ ມີບ່ອນແຈ້ງບ່ອນໜຶ່ງທີ່ມີແສງຣັດສະໝີອັນເຈີດຈ້າເກີນທີ່ຈະບັນລະຍາຍໄດ້. ຈາກບ່ອນນັ້ນ, ມີສຽງຂອງພຣະເຈົ້າດັງກ້ອງຂຶ້ນຄືກັບສຽງນ້ຳຫຼາຍສາຍກ່າວວ່າ: "ສຳເລັດແລ້ວ." (ພຣະນິມິດ 16:17). *{GC 636.2}*

ສຽງນັ້ນເຮັດໃຫ້ທ້ອງຟ້າ ແລະ ແຜ່ນດິນໂລກສັ່ນສະເທືອນ. ເກີດແຜ່ນດິນໄຫວຢ່າງໜັກ; "ຕັ້ງແຕ່ມະນຸດໄດ້ຖືກສ້າງຂຶ້ນມາໃນໂລກ ບໍ່ເຄີຍມີແຜ່ນດິນຫວັ່ນໄຫວອັນໃຫຍ່ ແລະ ຮ້າຍແຮງຂະໜາດນີ້ຈັກເທື່ອ; ນີ້ແມ່ນແຜ່ນດິນໄຫວຄັ້ງຍິ່ງໃຫຍ່ທີ່ສຸດ." (ພຣະນິມິດ 16:18). ທ້ອງຟ້າເບິ່ງຄືຜ້າກົ້ງທີ່ຖືກສະບັດແຍກອອກແລ້ວປິດລົງ; ສະຫງ່າຣາສີຈາກບັນລັງຂອງພຣະເຈົ້າແວບວາບສ່ອງລົງມາ; ພູເຂົາສັ່ນຄືຕົ້ນອໍ້ຖືກລົມພັດ; ກ້ອນຫີນແຕກກະຈາຍໄປ. ມີສຽງດັງຄືພະຍຸໃຫຍ່ກຳລັງມາ ແລະ ທະເລປັ່ນປ່ວນດ້ວຍຄວາມຮ້າຍແຮງ; ສຽງລົມພະຍຸດັງຂຶ້ນຄືສຽງຜີມານຈຳນວນຫຼວງຫຼາຍກຳລັງມຸ່ງໜ້າໄປເພື່ອທຳລາຍລ້າງ. ແຜ່ນດິນໂລກຂຶ້ນລົງຄືກັບຄື້ນທະເລ; ພື້ນແຜ່ນດິນແຕກແຍກອອກ ແລະ ເບິ່ງຄືຮາກຖານຂອງໂລກກຳລັງຈະພັງທະລາຍລົງ. ສາຍພູພັງຈົມລົງໄປ; ເກາະທີ່ມີຜູ້ຄົນອາໄສຢູ່ ກຳຈົມຫາຍໄປ. ບັນດານະຄອນໃຫຍ່ທີ່ມີທ່າເຮືອ ແລະ ຊົ່ວຮ້າຍຄືເມືອງໂຊໂດມ ກໍຖືກນ້ຳອັນຮ້າຍກາດກືນກິນລົງໄປ. ພຣະເຈົ້າຊົງລະນຶກເຖິງມະຫານະຄອນບາບີໂລນ ເພື່ອ "ໃຫ້ນະຄອນນີ້ດື່ມເຫຼົ້າອະງຸ່ນແຫ່ງຄວາມໂກດຮ້າຍຂອງພຣະອົງ." ມີໝາກເຫັບກ້ອນມະຫຶມາ "ແຕ່ລະກ້ອນໜັກປະມານ 45 ກິໂລກຼາມ" ຕົກລົງມາທຳລາຍຢ່າງກວ້າງຂວາງ. (ພຣະນິມິດ 16:19, 21 LCV). ນະຄອນທີ່ສະຫງ່າງາມທີ່ສຸດຂອງໂລກຖືກທຳລາຍລົງ. ຫໍຜາສາດອັນຫຼູຫຼາທີ່ບັນດາຜູ້ຍິ່ງໃຫຍ່ຂອງໂລກ ໄດ້ທຸ້ມເທຊັບສິນເພື່ອຍົກຍໍຕົນເອງກຳລັງພັງທະລາຍຕໍ່ໜ້າຕໍ່ຕາພວກເຂົາ. ກຳແພງຄຸກກໍແຕກອອກ ແລະ ໄພ່ພົນຂອງພຣະເຈົ້າທີ່ຖືກກັກຂັງຍ້ອນຄວາມເຊື່ອໄດ້ເປັນອິດສະຫຼະ. *{GC 636.3}*

ອຸບມຸງຝັ່ງສົບຖືກເປີດອອກ, "ຜູ້ຄົນຈຳນວນຫຼວງຫຼາຍທີ່ນອນໃນຜົງທຸລີຈະຕື່ນຂຶ້ນ; ບາງຄົນຈະໄດ້ຮັບຊີວິດອັນເປັນນິຣັນ ບາງຄົນຈະອັບອາຍ ແລະ ຖືກດູໝິ່ນໄປຈົນຊົ່ວນິຣັນດອນ." (ດານີເອນ 12:2 ດັດແປງຈາກສະບັບ NTV). ທຸກຄົນທີ່ຕາຍໄປໃນຂະນະທີ່ເຊື່ອໃນຂ່າວຂອງທູດສະຫວັນອົງທີສາມ ກຳຈະຟື້ນຄືນຊີວິດໃນສະພາບທີ່ມີສະຫງ່າຣາສີ ແລະ ຈະໄດ້ຍິນການປະກາດພັນທະສັນຍາແຫ່ງສັນຕິສຸກທີ່ພຣະເຈົ້າຊົງມີຕໍ່ຜູ້ທີ່ຮັກສາພຣະບັນຍັດຂອງພຣະອົງ. ສ່ວນ "ຄົນເຫຼົ່ານັ້ນທີ່ໄດ້ແທງພຣະອົງ" (ພຣະນິມິດ 1:7) ກັບພວກທີ່ເຍາะເຍີ້ຍ ແລະ ດູໝິ່ນພຣະຄຣິສ ໃນຂະນະທີ່ພຣະອົງ

ກຳລັງທົນທຸກທໍລະມານຈົນສິ້ນພຣະຊົນ, ລວມທັງຜູ້ທີ່ຕໍ່ຕ້ານຄວາມຈິງ ແລະ ຄົນຂອງພຣະອົງຢ່າງຮຸນແຮງທີ່ສຸດ, ຄົນເຫຼົ່ານີ້ຈະຟື້ນຄືນຊີວິດ ເພື່ອເຫັນພຣະອົງເຕັມດ້ວຍສະຫງ່າຣາສີ ແລະ ເຫັນຜູ້ທີ່ສັດຊື່ ແລະ ເຊື່ອຟັງນັ້ນໄດ້ຮັບກຽດ. {GC 637.1}

ເມກໝາທຶບຍັງປົກຄຸມທ້ອງຟ້າຢູ່, ແຕ່ແສງດວງຕາເວັນສ່ອງແວບມາເປັນບາງຄັ້ງ ເໝືອນດັ່ງດວງຕາຂອງພຣະເຢໂຮວາທີ່ຈ້ອງຈະລົງໂທດ. ຟ້າແມບເຮັດໃຫ້ພື້ນຜິວໂລກລຸກເປັນແຜ່ນໄຟ. ເໜືອສຽງຟ້າຮ້ອງອັນໜ້າຢ້ານກົວນັ້ນ ມີສຽງເລີກລັບໜ້າສະພຶງກົວ, ສຽງນັ້ນປະກາດຄຳຕັດສິນລົງໂທດຄົນອະທຳ. ບໍ່ແມ່ນທຸກຄົນຈະເຂົ້າໃຈຄວາມໝາຍຂອງຖ້ອຍຄຳເຫຼົ່ານັ້ນ ແຕ່ພວກຜູ້ສອນຄວາມເທັດໄດ້ຍິນ ແລະ ເຂົ້າໃຈຢ່າງຈະແຈ້ງ. ບໍ່ດົນມານີ້, ຄົນເຫຼົ່ານັ້ນໄດ້ດຳເນີນຊີວິດແບບອວດອ້າງ ແລະ ທ້າທາຍເໝືອນບໍ່ຮູ້ຈັກຢ້ານກົວ. ທີ່ຜ່ານມາ, ພວກເຂົາສະດີດສະດິ້ງທີ່ໄດ້ທາລຸນນະກຳຄົນທີ່ຮັກສາພຣະບັນຍັດຂອງພຣະເຈົ້າ, ແຕ່ບັດນີ້ ພວກເຂົາຕົກຕະລຶງຢ່າງໃຫຍ່ຫຼວງ ແລະ ຢ້ານກົວຈົນຕົວສັ່ນ. ສຽງຮ້ອງໄຫ້ຄວນຄາງຂອງພວກເຂົາດັງກວ່າສຽງທຳມະຊາດ. ເຫຼົ່າຜີມານຮ້າຍຍອມຮັບວ່າພຣະຄຣິສຊົງເປັນພຣະເຈົ້າ ແລະ ສັ່ນສະທ້ານຕໍ່ໜ້າຣິດອຳນາດຂອງພຣະອົງ, ໃນຂະນະທີ່ມະນຸດພາກັນອ້ອນວອນຂໍຄວາມເມດຕາ ແລະ ຂາບລົງດ້ວຍຄວາມຢ້ານກົວສຸດຂີດ. {GC 637.2}

ຄົນຈອງຫອງອັບອາຍ, ຄົນຊອບທຳເບີກບານ

ຜູ້ເຜີຍພຣະທຳໃນສະໄໝບູຮານ ເມື່ອໄດ້ເຫັນວັນຂອງພຣະເຈົ້າໃນນິມິດ ໄດ້ກ່າວວ່າ: “ຮ້ອງຄວນຄາງດ້ວຍຄວາມເຈັບປວດສາເຖີດ ວັນຂອງພຣະເຈົ້າຢາເວມາໃກ້ແລ້ວ ຄືມື້ທີ່ພຣະເຈົ້າອົງຊົງຣິດອຳນາດຍິ່ງໃຫຍ່ນຳໄພພິບັດມາ.” (ເອຊາຢາ 13:6). “ພວກເຂົາຈະລີ້ຢູ່ໃນຖ້ຳ ຢູ່ໃນໂງ່ນຫີນຕາມເນີນພູ ຫຼື ຂຸດຮູຢູ່ໃນດິນ ເພື່ອຊອກຫາທີ່ຈະປົບໜີຈາກຄວາມໂກດຮ້າຍຂອງພຣະເຈົ້າຢາເວ ແລະ ຫຼົບລີ້ຈາກຣິດອຳນາດ ແລະ ສະຫງ່າຣາສີຂອງພຣະອົງ. ວັນໜຶ່ງຈະມາເຖິງ ເມື່ອຄວາມອວດອົ່ງຈອງຫອງຂອງມະນຸດຈະສິ້ນສຸດລົງ ແລະ ຄວາມອວດດີຂອງພວກເຂົາຈະຖືກທຳລາຍ. ແລ້ວແມ່ນພຣະເຈົ້າຢາເວເທົ່ານັ້ນ ທີ່ຈະໄດ້ຮັບກຽດ ແລະ ຄຳຍົກຍໍສັນລະເສີນ. ໃນວັນນັ້ນ ພຣະເຈົ້າຢາເວອົງຊົງຣິດອຳນາດຍິ່ງໃຫຍ່ ຈະເຮັດໃຫ້ທຸກຄົນທີ່ມີອຳນາດ, ທຸກຄົນທີ່ອວດອົ່ງ ແລະ ທຸກຄົນທີ່ຈອງຫອງນັ້ນໄດ້ຖ່ອມຕົວລົງ.” “ເມື່ອວັນນັ້ນມາເຖິງ ພວກເຂົາຈະໂຍນຮູບເຄົາລົບເປັນເງິນເປັນຄຳ ທີ່ພວກເຂົາໄດ້ສ້າງຂຶ້ນນັ້ນຖິ້ມເສຍ ແລະ ປະໃຫ້ເປັນບ່ອນຢູ່ຂອງໂຕໜູ ແລະ ໂຕເຈຍ. ເມື່ອພຣະເຈົ້າຢາເວມາເຮັດໃຫ້ໂລກສັ່ນສະເທືອນ ປະຊາຊົນຈະລີ້ຢູ່ໃນຖ້ຳ ຢູ່ໃນໂງ່ນຫີນຕາມເນີນພູ ຫຼື ຂຸດຮູຢູ່ໃນດິນ ເພື່ອຊອກຫາທີ່ຈະປົບໜີຈາກຄວາມໂກດຮ້າຍຂອງພຣະອົງ ແລະ ຫຼົບລີ້ຈາກຣິດອຳນາດ ແລະ ສະຫງ່າຣາສີຂອງພຣະອົງ.” (ເອຊາຢາ 2:10–12; 20–21). {GC 638.1}

ແສງດາວສ່ອງຜ່ານໝູ່ເມກ, ເຈີດຈ້າກວ່າເກົ່າເຖິງສີ່ເທົ່າ ເມື່ອທຽບກັບຄວາມມືດອ້ອມຂ້າງ. ແສງນັ້ນນຳຄວາມຫວັງ ແລະ ຄວາມຊົ່ນຊື່ນຍິນດີມາສູ່ຜູ້ສັດຊື່, ແຕ່ເປັນເຄື່ອງໝາຍແຫ່ງການຕັດສິນລົງໂທດ ແລະ ພຣະພິໂຣດຂອງພຣະເຈົ້າສຳລັບຜູ້ທີ່ລະເມີດພຣະບັນຍັດຂອງພຣະອົງ. ບັດນີ້ຜູ້ທີ່ໄດ້ສະຫຼະທຸກສິ່ງເພື່ອພຣະຄຣິສ ໄດ້ຮັບຄວາມປອດໄພ ແລະ ຖືກເຊື່ອງຊ່ອນໄວ້ ເໝືອນດັ່ງຢູ່ໃຕ້ຮົ່ມກຳບັງໃນພຣະວິຫານຂອງພຣະເຈົ້າ (ເບິ່ງ ເພງສັນລະເສີນ 27:5). ພວກເຂົາໄດ້ຜ່ານການທົດສອບແລ້ວ ແລະ ໄດ້ພິສູດຄວາມສັດຊື່ຕໍ່ພຣະອົງ ຜູ້ສິ້ນພຣະຊົນເພື່ອພວກເຂົາ ຕໍ່ໜ້າຊາວໂລກ ແລະ ຜູ້ໝິ່ນປະໝາດຄວາມຈິງ. ການປ່ຽນແປງອັນໜ້າອັດສະຈັນໄດ້ເກີດຂຶ້ນກັບຜູ້ທີ່ຢຶດໝັ້ນໃນຄວາມສັດຊື່ ແມ່ນໃນຍາມທີ່ຕ້ອງປະເຊີນກັບຄວາມຕາຍ. ພວກເຂົາໄດ້ຮັບການປົດປ່ອຍຢ່າງກະທັນຫັນ ຈາກການປົກຄອງອັນໂຫດຮ້າຍ ແລະ ມືດມົນຂອງມະນຸດທີ່ມີຈິດໃຈຊົ່ວຮ້າຍຄືຜີມານ. ໃບໜ້າຂອງພວກເຂົາທີ່ເຄີຍ

ຊີດຂາວ, ເຕັມໄປດ້ວຍຄວາມອິດເມື່ອຍ ແລະ ຄວາມວິຕົກກັງວົນ ບັດນີ້ກັບເບີກບານດ້ວຍຄວາມ ຍິນດີ, ຄວາມເຊື່ອ ແລະ ຄວາມຮັກ. ພວກເຂົາຮ້ອງຂຶ້ນດ້ວຍສຽງເພງແຫ່ງໄຊຊະນະວ່າ: “ພຣະເຈົ້າເປັນ ທີ່ກຳບັງ ແລະ ກຳລັງຂອງພວກຂ້ານ້ອຍ ພຣະອົງພ້ອມຊ່ວຍເຫຼືອໃນຄາວພວກຂ້ານ້ອຍຍາກລຳບາກ. ສະນັ້ນ, ພວກຂ້ານ້ອຍຈຶ່ງບໍ່ຢ້ານແມ່ນວ່າ ໂລກນີ້ສະທ້ານຫວັ່ນໄຫວ ໜ່ວຍພູຖະຫຼົ່ມໃສ່ມະຫາສະໝຸດ ອັນເລິກກໍຕາມ ເຖິງແມ່ນວ່ານ້ຳທະເລສົ່ງສຽງບ້າຄັ່ງດັງຮ້າຍແຮງ ຈົນເນີນພູສັ່ນສະເທືອນຍ້ອນຄວາມ ຮຸນແຮງນັ້ນ.” (ເພງສັນລະເສີນ 46:1–3). {GC 638.2}

ໃນຂະນະທີ່ຄຳອະທິຖານແຫ່ງຄວາມເຊື່ອໝັ້ນອັນບໍຣິສຸດນີ້ ກຳລັງຂຶ້ນໄປເຖິງພຣະເຈົ້າ, ໝູ່ເມກ ກໍແຍກອອກ ແລະ ທ້ອງຟ້າອັນເຕັມໄປດ້ວຍດວງດາວກໍປາກົດໃຫ້ເຫັນ ເປັນພາບທີ່ງົດງາມເກີນ ທີ່ຈະບັນລະຍາຍໄດ້ ເມື່ອທຽບກັບຄວາມມືດມົວຂອງທ້ອງຟ້າສ່ວນອື່ນ. ແສງຣັດສະໝີພາບແຫ່ງເມືອງ ວິໄລ ສ່ອງລົງມາຈາກປະຕູທີ່ແງ້ມໄວ້. ໃນທັນໃດນັ້ນ, ມີມືປາກົດຢູ່ເທິງທ້ອງຟ້າ ຖືແຜ່ນຫີນສອງແຜ່ນທີ່ ພັບໄວ້ນຳກັນ. ຜູ້ເຜີຍພຣະທຳກ່າວວ່າ: “ຟ້າສະຫວັນປະກາດວ່າ ພຣະເຈົ້າຊົງຊອບທຳ ແລະ ຜູ້ຕັດສິນ ຄວາມແມ່ນພຣະອົງເອງ ຄືພຣະເຈົ້າ.” (ເພງສັນລະເສີນ 50:6). ພຣະບັນຍັດອັນສັກສິດນັ້ນ ຄືຄວາມ ຊອບທຳຂອງພຣະເຈົ້າ ເຊິ່ງຖືກປະກາດທ່າມກາງຟ້າຮ້ອງ ແລະ ແປວໄຟທີ່ພູເຂົາຊີນາຍ ເພື່ອເປັນ ແນວທາງຂອງຊີວິດ; ບັດນີ້, ພຣະບັນຍັດນັ້ນ ໄດ້ຖືກເປີດເຜີຍໃຫ້ມະນຸດເຫັນວ່າເປັນກົດເກນໃນການ ພິພາກສາ. ມືນັ້ນເປີດແຜ່ນຫີນອອກ ແລະ ຄົນທັ້ງຫຼາຍໄດ້ເຫັນພຣະບັນຍັດສິບປະການ ດຸດດັ່ງຂຽນ ດ້ວຍປາກກາເພີ່ງ. ຖ້ອຍຄຳເຫຼົ່ານັ້ນຈະແຈ້ງຈົນທຸກຄົນອ່ານອອກ. ເມື່ອຄົນທັ້ງຫຼາຍໄດ້ເຫັນພຣະບັນຍັດ ນັ້ນ, ພວກເຂົາພາກັນຈື່ຄວາມຈິງທັງໝົດ; ຄວາມເຊື່ອຖືອັນງົມງວາຍ ແລະ ຄຳສອນຜິດໆໄດ້ຖືກ ກຳຈັດອອກຈາກຈິດໃຈ. ພຣະບັນຍັດສິບປະການຂອງພຣະເຈົ້າ ເຖິງແມ່ນວ່າ ຈະເປັນຂໍ້ຄວາມສັ້ນໆ ກໍຕາມ ແຕ່ມີຄວາມໝາຍກວ້າງຂວາງ ແລະ ເດັດຂາດ; ບັດນີ້, ໄດ້ປາກົດຕໍ່ໜ້າມະນຸດທຸກຄົນ ແລ້ວ. {GC 639.1}

ບໍ່ມີຖ້ອຍຄຳທີ່ຈະພັນລະນາເຖິງຄວາມຢ້ານກົວ ແລະ ຄວາມສິ້ນຫວັງຂອງຜູ້ທີ່ເຄີຍຢຽບຢ່ຳພຣະ-ບັນຍັດອັນສັກສິດຂອງພຣະເຈົ້າ. ພຣະເຈົ້າຊົງມອບພຣະບັນຍັດໃຫ້ພວກເຂົາ ເພື່ອພວກເຂົາຈະສາມາດ ປຽບທຽບອຸປະນິໄສຂອງຕົນກັບພຣະບັນຍັດ ແລະ ຮູ້ເຫັນຂໍ້ບົກຜ່ອງຂອງຕົນຕອນທີ່ຍັງມີໂອກາດ ກັບໃຈໃໝ່ ແລະ ປັບປຸງຕົວເອງ. ແຕ່ຍ້ອນວ່າຢາກເປັນທີ່ຍອມຮັບຂອງຊາວໂລກ ພວກເຂົາກໍປະຖິ້ມ ພຣະບັນຍັດເຫຼົ່ານັ້ນ ແລະ ສອນຄົນອື່ນໃຫ້ລະເມີດບຳ. ພວກເຂົາພະຍາຍາມບັງຄັບໄພ່ພົນຂອງ ພຣະເຈົ້າໃຫ້ລ່ວງລະເມີດວັນສະບາໂຕຂອງພຣະອົງ. ບັດນີ້, ພວກເຂົາຖືກພິພາກສາລົງໂທດ ດ້ວຍ ພຣະບັນຍັດທີ່ພວກເຂົາໄດ້ດູຖູກ. ພວກເຂົາເຫັນຢ່າງຈະແຈ້ງແລ້ວວ່າບໍ່ມີຂໍ້ແກ້ຕົວໃດໆ. ພວກເຂົາໄດ້ ເລືອກແລ້ວວ່າຈະຮັບໃຊ້ ແລະ ນະມັດສະການຜູ້ໃດ. “ອີກເທື່ອໜຶ່ງ ປະຊາຊົນຂອງເຮົາຈະເຫັນຄວາມ ແຕກຕ່າງລະຫວ່າງສິ່ງທີ່ເກີດຂຶ້ນຕໍ່ຄົນຊອບທຳ ແລະ ຄົນອະທຳ ແລະລະຫວ່າງສິ່ງທີ່ເກີດຂຶ້ນຕໍ່ຜູ້ທີ່ ຮັບໃຊ້ພຣະເຈົ້າ ແລະ ຕໍ່ຜູ້ທີ່ບໍ່ຮັບໃຊ້ພຣະອົງ.” (ມາລາກີ 3:18). {GC 639.2}

ເມື່ອເຖິງເວລານັ້ນ, ຜູ້ທີ່ຕໍ່ຕ້ານພຣະບັນຍັດຂອງພຣະເຈົ້າ ຕັ້ງແຕ່ພວກສາສະໜາຈານຈົນຮອດຜູ້ ຕ່ຳຕ້ອຍທີ່ສຸດ ຈະມີຄວາມເຂົ້າໃຈໃໝ່ກ່ຽວກັບຄວາມຈິງ ແລະ ໜ້າທີ່ຂອງມະນຸດ. ພວກເຂົາເຫັນ ວ່າວັນສະບາໂຕຕາມພຣະບັນຍັດຂໍ້ທີສີ່ ເປັນຕາປະທັບຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ ແຕ່ກໍຊ້າເກີນໄປ ເສຍແລ້ວ. ຄົນເຫຼົ່ານີ້ເຫັນລັກສະນະທີ່ແທ້ຈິງຂອງວັນສະບາໂຕປອມ ແລະ ເຫັນວ່າຊີວິດຂອງຕົນໄດ້ ກໍ່ສ້າງຢູ່ເທິງດິນຊາຍ ແຕ່ກໍສວາຍເກີນໄປແລ້ວ. ພວກເຂົາພົບວ່າ ຕົນເອງໄດ້ຕໍ່ສູ້ກັບພຣະເຈົ້າ. ພວກ ສາສະໜາຈານໄດ້ພາຄົນໄປສູ່ຄວາມພິນາດ ໃນຂະນະທີ່ອ້າງວ່າກຳລັງນຳພາໄປສູ່ປະຕູສະຫວັນ. ໃນ ວັນພິພາກສາຄັ້ງສຸດທ້າຍມະນຸດຈຶ່ງຈະຮູ້ວ່າ ຜູ້ທີ່ຢູ່ໃນຕຳແໜ່ງສັກສິດນັ້ນມີຄວາມຮັບຜິດຊອບອັນ

ໃຫຍ່ຫຼວງພຽງໃດ ແລະ ຜົນຂອງການບໍ່ສັດຊື່ຂອງພວກເຂົານັ້ນຮ້າຍແຮງປານໃດ. ພວກເຮົາຈະບໍ່ຊາບຊຶ້ງໃນຄວາມສູນເສຍທີ່ເກີດຂຶ້ນເມື່ອມະນຸດຄົນໜຶ່ງພິນາດ ຈົນກວ່າພວກເຮົາຈະເຂົ້າສູ່ຊີວິດນິຣັນ. ຈຸດຈົບຂອງຜູ້ທີ່ພຣະເຈົ້າຊົງກ່າວວ່າ: "ເຈົ້າຜູ້ຮັບໃຊ້ທີ່ຊົ່ວຮ້າຍ ຈົ່ງໄປໃຫ້ພົ້ນ" ນັ້ນຈະໜ້າຢ້ານກົວແທ້. *{GC 640.1}*

ອົງພຣະຜູ້ເປັນເຈົ້າສະເດັດມາ

ພຣະສຸຣະສຽງຂອງພຣະເຈົ້າດັງກ້ອງມາຈາກສະຫວັນປະກາດວັນ ແລະ ຊົ່ວໂມງແຫ່ງການສະເດັດມາຂອງພຣະເຢຊູ ພ້ອມທັງມອບພັນທະສັນຍາອັນຕະຫຼອດໄປເປັນນິດແກ່ໄພ່ພົນຂອງພຣະອົງ. ພຣະ-ສຸຣະສຽງຂອງພຣະອົງກ້ອງກັງວານໄປທົ່ວໂລກ ເໝືອນດັ່ງສຽງຟ້າຮ້ອງທີ່ດັງທີ່ສຸດ. ຊົນຊາດອິດສະຣາເອນຂອງພຣະເຈົ້າຢືນຟັງຢູ່ ດວງຕາຈັບຈ້ອງຢູ່ເບື້ອງເທິງ. ໃບໜ້າທຸກຄົນສະຫວ່າງສະໄຫວດ້ວຍສະຫງ່າຣາສີຂອງພຣະອົງ ແລະ ເປັ່ງປະກາຍເໝືອນໃບໜ້າຂອງໂມເຊ ເມື່ອເພິ່ນລົງມາຈາກພູເຂົາຊີນາຍ. ຄົນອະທຳບໍ່ສາມາດຫຼຽວເບິ່ງພວກເຂົາໄດ້. ເມື່ອການປະກາດດັງຂຶ້ນ ເພື່ອອວຍພອນຜູ້ທີ່ໄດ້ຖວາຍກຽດແດ່ພຣະເຈົ້າດ້ວຍການຮັກສາວັນສະບາໂຕຂອງພຣະອົງໃຫ້ບໍຣິສຸດ, ພວກເຂົາໂຮ່ຮ້ອງສະຫຼອງໄຊ ດ້ວຍສຽງກຶກກ້ອງກັງວານ. *{GC 640.2}*

ບໍ່ດົນກໍມີເມກດຳນ້ອຍໆກ້ອນໜຶ່ງປາກົດທາງທິດຕາເວັນອອກ, ມີຂະໜາດປະມານເຄິ່ງຝ່າມືຄົນ. ມັນຄືເມກອ້ອມຮອບພຣະຜູ້ຊ່ວຍໃຫ້ລອດ ເຊິ່ງເບິ່ງແຕ່ໄກເໝືອນກັບວ່າພຣະອົງຖືກຫໍ່ຫຸ້ມດ້ວຍຄວາມມືດ. ໄພ່ພົນຂອງພຣະເຈົ້າຮູ້ວ່າ ນີ້ແມ່ນໝາຍສຳຄັນແຫ່ງບຸດມະນຸດ. ພວກເຂົາຈ້ອງເບິ່ງກ້ອນເມກນັ້ນຢ່າງມິດງຽບ, ຍິ່ງເຄື່ອນເຂົ້າມາໃກ້ໂລກເທົ່າໃດ ກ້ອນເມກນັ້ນກໍຍິ່ງມີແສງຣັດສະໝີຫຼາຍຂຶ້ນເທົ່ານັ້ນ ຈົນກາຍເປັນເມກຂາວກ້ອນໃຫຍ່. ດ້ານລຸ່ມຂອງເມກມີແສງຣັດສະໝີຄ້າຍຄືກັບໄຟທີ່ລຸກໄໝ້, ມີສາຍຮຸ້ງແຫ່ງພັນທະສັນຍາໂຄ້ງຢູ່ຂ້າງເທິງ. ພຣະເຢຊູສະເດັດມາດັ່ງຜູ້ພິຊິດອັນຍິ່ງໃຫຍ່ ບໍ່ແມ່ນໃນຖານະມະນຸດທີ່ຕ້ອງດື່ມຈາກຈອກແຫ່ງຄວາມອັບອາຍ ແລະ ຄວາມເສົ້າສະຫຼົດໃຈອີກຕໍ່ໄປ, ແຕ່ພຣະອົງສະເດັດມາໃນຖານະຜູ້ມີໄຊຊະນະອັນຍິ່ງໃຫຍ່ໃນສະຫວັນ ແລະ ແຜ່ນດິນໂລກ ເພື່ອພິພາກສາທັງຄົນເປັນ ແລະ ຄົນຕາຍ. ພຣະອົງຊົງພຣະນາມວ່າ, "'ສັດຊື່' ແລະ 'ທ່ຽງແທ້.' ພຣະອົງ . . . ຊົງພິພາກສາ ແລະ ສູ້ຮົບດ້ວຍຄວາມຍຸຕິທຳ. ຝູງກອງທັບໃນສະຫວັນ . . . ຕິດຕາມພຣະອົງໄປ." (ພຣະນິມິດ 19:11, 14). ເຫຼົ່າທູດສະຫວັນບໍຣິສຸດຈຳນວນມະຫາສານທີ່ບໍ່ອາດນັບໄດ້ ກໍຕິດຕາມພຣະອົງໄປ ພ້ອມດ້ວຍການຮ້ອງບົດເພງອັນໄພເລາະແຫ່ງສະຫວັນ. ທ້ອງຟ້າເຕັມໄປດ້ວຍເຫຼົ່າທູດສະຫວັນ ທີ່ສະຫວ່າງສະໄຫວເຮືອງຮອງ. ທູດສະຫວັນເຫຼົ່ານີ້ມີຈຳນວນ "ໝື່ນຄູນໝື່ນ . . . ແລະ ພັນຄູນພັນ." (ພຣະນິມິດ 5:11 ສະບັບລາວບູຮານ). ບໍ່ມີຜູ້ໃດສາມາດພັນລະນາພາບນີ້ໄດ້, ບໍ່ມີໃຜສາມາດເຂົ້າໃຈເຖິງຄວາມຮຸ່ງເຮືອງອັນຍິ່ງໃຫຍ່ຂອງມັນໄດ້. "ສະຫງ່າຣາສີຂອງພຣະອົງປົກຄຸມທົ່ວເທິງຟ້າສະຫວັນ, ທີ່ແຜ່ນດິນໂລກ ກໍເຕັມດ້ວຍຄຳສັນລະເສີນຂອງພຣະອົງ. ພຣະອົງສະເດັດມາພ້ອມແສງສະຫວ່າງສະໄຫວ ອັນເປັນແສງທີ່ສຸກໃສຂອງຟ້າແມບເຫຼື້ອມ." (ຮາບາກຸກ 3:3, 4). ເມື່ອກ້ອນເມກອັນມີຊີວິດນັ້ນເຄື່ອນເຂົ້າມາໃກ້ຂຶ້ນ, ຕາທຸກຄົນຈະເຫັນອົງເຈົ້າຊີວິດ. ພຣະອົງບໍ່ໄດ້ສວມມົງກຸດໜາມໃນຄັ້ງນີ້ ແຕ່ມີມົງກຸດແຫ່ງຣັດສະໝີພາບຢູ່ເທິງພຣະສຽນອັນບໍຣິສຸດຂອງພຣະອົງ. ພຣະພັກຂອງພຣະອົງສ່ອງແສງທີ່ເຈີດຈ້າສະຫວ່າງສະໄຫວກວ່າແສງຕາເວັນຍາມທ່ຽງວັນ. "ທີ່ເສື້ອຄຸມ ແລະ ທີ່ກົກຂາຂອງພຣະອົງມີນາມນີ້ຈາລຶກວ່າ: *ກະສັດເໜືອກະສັດທັງຫຼາຍ ແລະ ເຈົ້ານາຍເໜືອເຈົ້ານາຍທັງຫຼາຍ.*" (ພຣະນິມິດ 19:16 LCV). *{GC 640.3}*

"ໜ້າຕາທຸກຄົນຊີດຂາວ" ຕໍ່ພຣະພັກຂອງພຣະອົງ. ຜູ້ທີ່ໄດ້ປະຕິເສດພຣະກະລຸນາຂອງພຣະເຈົ້າເກີດຄວາມຢ້ານກົວສຸດຂີດ ເມື່ອຕ້ອງປະເຊີນກັບຄວາມຈິບຫາຍຕະຫຼອດການ. "ທຸກຄົນຕ່າງກໍຢ້ານ ຈົນ

ອີກສັ່ນຂວັນເສຍ ຈົນຫົວເຂົ່າທຸກຄົນສັ່ນເຊັນດ້ວຍຄວາມຢ້ານ ແລະ . . . ຈົນສີໜ້າມ້ານຫຼ່າເຫຼືອງໄປທັງ ນັ້ນ.” (ເຢເຣມີຢາ 30:6; ນາຮູມ 2:10). ຜູ້ຊອບທຳຮ້ອງອອກມາດ້ວຍອາການສັ່ນສະທ້ານວ່າ: “ຜູ້ໃດ ຈະສາມາດຢືນຢູ່ໄດ້?” ບົດເພງຂອງເຫຼົ່າທູດສະຫວັນງຽບລົງ ແລະ ມີຊ່ວງເວລາແຫ່ງຄວາມງຽບສະຫງັດ ອັນໜ້າຢ້ານກົວ. ຈາກນັ້ນ, ສຽງຂອງພຣະເຢຊູກໍດັງຂຶ້ນວ່າ: “ພຣະຄຸນຂອງເຮົາກໍພຽງພໍສຳລັບພວກເຈົ້າ ແລ້ວ.” ໃນທັນໃດນັ້ນ, ໜ້າຕາຂອງຜູ້ຊອບທຳກໍຊື່ນບານຂຶ້ນ ແລະ ຄວາມຊົ່ນຊື່ນຍິນດີກໍເຕັມລົ້ນ ທຸກຫົວໃຈ, ເຫຼົ່າທູດສະຫວັນກໍຮ້ອງເພງດ້ວຍສຽງສູງຂຶ້ນອີກ ໃນຂະນະທີ່ພວກເພິ່ນບິນໃກ້ເຂົ້າມາຫາ ໂລກ. {GC 641.1}

ພຣະມະຫາຣາຊາແຫ່ງກະສັດທັງປວງ ສະເດັດລົງມາພ້ອມກັບກ້ອນເມກນັ້ນ ມີແປວໄຟອ້ອມຮອບ ພຣະອົງ. ທ້ອງຟ້າມ້ວນຂຶ້ນຄືກັນກັບໜັງສືມ້ວນ, ແຜ່ນດິນໂລກສັ່ນສະເທືອນຕໍ່ພຣະພັກພຣະອົງ ແລະ ພູເຂົາທຸກໜ່ວຍກັບເກາะທຸກແຫ່ງກໍເລື່ອນອອກຈາກບ່ອນຂອງມັນ. “ພຣະເຈົ້າຂອງພວກເຮົາກຳລັງມາ ຢ່າງໂດ່ງດັງ ພຣະອົງມີໄຟລຸກຢູ່ ແລະ ມີລົມພະຍຸອັນຮ້າຍແຮງພັດອ້ອມພຣະອົງໄວ້. ພຣະອົງຊົງ ຮຽກເອີ້ນຟ້າສະຫວັນເບື້ອງເທິງ ແລະ ແຜ່ນດິນໂລກມາ ໃຫ້ເປັນພະຍານ ເພື່ອຕັດສິນປະຊາຊົນຂອງ ພຣະອົງ.” (ເພງສັນລະເສີນ 50:3, 4). {GC 641.2}

ຄົນອະທຳໝົດຄຳເຍາะເຍີ້ຍ

“ແລ້ວກະສັດທັງຫຼາຍໃນໂລກ, ພວກຜູ້ປົກຄອງປะເທດ ແລะ ພວກເຈົ້ານາຍ, ພວກຄົນຮັ່ງມີ ແລະ ພວກຜູ້ມີອຳນาด ແລະ ຄົນທັງຫຼາຍບ່ໍວ່າເປັນທาดຮັບໃຊ້ ຫຼືເປັນອິດสะຫຼะ ต่างกำไปลี้ ຢູ່ตามถ้ำ ແລะ ຢູ່ใต้โง่นหินตามพูต่างๆ. ພວກເຂົາເຫຼົ່ານັ້ນ ຮ້ອງบอกพู ແລะ โง่นหิน ว่า, ‘ຈົ່ງเจื่อนลົງเທິງพวกเธิา ແລะ บังพวกเธิาไว้ ให้พ้นจากสายตาของพระองค์ ผู้ ที่นั่งเทิงบันลัง ແລะ จากความโกดร้ายของพระเมสาน้อยนั้น, เพาะว่า อันสำคัญแห่ง ความโกดร้ายอันใหย่ของพระองค์ได้มาเถิงแล้ว ແລະ ผู้ใดหื่อาดจะทินยู่ได้?’” (พระนิมิด 6:15–17). {GC 642.1}

ภานเยาะเย้ิยถากถางได้ยุดสิ้นลง. ปากที่เว้าต่อกำถืกปิดงุบ. สຽงอาอุดปะทะกัน, ความ อุ้นอาย ของสะหฺามธ์บ ແລะ ภานข้าฟันลันแทงกำมิดงุบลง. บัดนี้, มิแต่สຽงอะทิถาน อ้อนวอน ແລะ สຽงร้องไห้ต่ำถวนเท่านั้น. ถนนทั้งหลายที่บ่ดินมานี้ได้เยาะเย้ิยถากถาง บัดนี้ กับร้องขึ้นว่า: “ฉันยิ่งใหย่แห่งความโกดร้ายของพระองค์มาเถิงแล้ว ແລะ ผู้ใดจะสามาด ทินต่อฉันนั้นได้?” (พระนิมิด 6:17 LCV). ถนนอะทำพากันอะทิถานขอให้ก้อนหินแห่ง พูเขา เจื่อนลงมาทับพวกเขาเสย ดีกว่าที่จะต้องปะเชินหน้ากับพระองค์ ผู้ที่พวกเขาได้ ดูหมิ่น ແລะ ปะติเสด. {GC 642.2}

ພระสุระสຽงของพระเยซู ดังเข้าหูของถนนตาย; ถนนอะทำรู้จักสຽงนั้นดี ถือสຽงอิงออนอัน อ่อนโยน ที่เอิ้นให้พวกเขากับใจใหม่หลายต่อหลายเที่อ. พวกเขาได้ยินสຽงนั้นผ่านคำอ้อนวอน ของหมู่เพื่อน, พี่น้อง ແລะ พระผู้ไถ่. สำลับผู้ที่ปะติเสดพระคุนของพระองค์แล้ว, บ่มีสຽงใด จะสร้างความรู้สึกผิดหลาย เท่ากับสຽงที่เคียอิงออนมาดินบานว่า: “จົ່ງเธิาเธัดการชั่วร้ายที่ พวกเจ้ากำลังเธัดยู่นั้นสา. เป็นหยังพวกเจ้าจึ่งยากตาย?” (เอเซคฺยล 33:11). โอ้, คันถ้า สຽงนั้นเป็นพຽงสຽงของถนนแปกหน้าสำลับพวกเขา กำถ่งดีหลายแท้หื่! พระเยซูชิงกล่าวว่า: “เธิา ได้เอิ้นหาเจ้า ແລะ เชินเจ้ามา, แต่เจ้าพัดบ่ตอบเธิา. เธิาได้ยื่นมือให้เจ้าจับ, แต่เจ้าพัด

ເປີດເສີຍຢູ່ . . . ເຈົ້າບໍ່ໄດ້ເອົາໃຈໃສ່ຕໍ່ຄຳແນະນຳຂອງເຮົາ ແລະ ບໍ່ຍອມໃຫ້ເຮົາຕັກເຕືອນ.” (ສຸພາສິດ 1:24, 25). ສ່ຽງນັ້ນປຸກຄວາມຊົງຈຳທີ່ພວກເຂົາປາຖະໜາຢາກລືບອອກ ຄືຄຳເຕືອນທີ່ຖືກດູໝິ່ນ, ຄຳເຊື້ອເຊີນທີ່ຖືກປະຕິເສດ ແລະ ໂອກາດພິເສດທີ່ພວກເຂົາເມີນເສີຍບໍ່ເອົາໃຈໃສ່. *{GC 642.3}*

ກຸ່ມຄົນທີ່ເຄີຍເຍາะເຍີ້ຍພຣະຄຣິສໃນເວລາທີ່ພຣະອົງທົນທຸກກຳຢູ່ທີ່ນັ້ນດ້ວຍ. ຖ້ອຍຄຳທີ່ພຣະ-ຜູ້ຊ່ວຍໃຫ້ລອດໄດ້ກ່າວໄວ້ກັບມະຫາປະໂຣຫິດດັງກ້ອງຢູ່ໃນຄວາມຊົງຈຳຂອງພວກເຂົາວ່າ: “ໃນເວລາຕໍ່ໄປ ພວກເຈົ້າຈະເຫັນບຸດມະນຸດນັ່ງຢູ່ເບື້ອງຂວາຂອງອົງຊົງຣິດອຳນາດຍິ່ງໃຫຍ່ ແລະ ກຳລັງສະເດັດມາເທິງເມກໃນສະຫວັນ.” (ມັດທາຍ 26:64). ບັດນີ້, ພວກເຂົາເຫັນພຣະອົງເຕັມດ້ວຍສະຫງ່າຣາສີ ແລະ ຍັງຈະໄດ້ເຫັນພຣະອົງປະທັບຢູ່ເບື້ອງຂວາຂອງພຣະເຈົ້າຜູ້ຊົງມະຫິດທິຣິດ. *{GC 643.1}*

ບັດນີ້, ຜູ້ທີ່ເຄີຍເຍາะເຍີ້ຍການອ້າງວ່າ ພຣະອົງຊົງເປັນພຣະບຸດຂອງພຣະເຈົ້າກໍບໍ່ມີຄຳຈະເວົ້າ. ກະສັດເຮໂຣດຜູ້ທະນົງຕົນກຳຢູ່ທີ່ນັ້ນ, ເພິ່ນເຄີຍຫົວຂວັນພຣະເຢຊູໃນເລື່ອງການເປັນກະສັດ ແລະ ສັ່ງໃຫ້ພວກທະຫານເຍາะເຍີ້ຍພຣະອົງ ດ້ວຍການສວມມົງກຸດໃຫ້ພຣະອົງ. ນອກຈາກນັ້ນ, ກຳຍັງມີພວກຄົນທີ່ໃຊ້ມືອັນເປິເປື້ອນ ເອົາເສື້ອຄຸມສີມ່ວງມານຸ່ງໃຫ້ພຣະອົງ, ເອົາມົງກຸດໜາມມາສວມໃສ່ພຣະສຽນ ແລະ ວາງໄມ້ຄ້ອນໃສ່ພຣະຫັດທີ່ບໍ່ຂັດຂືນຂອງພຣະອົງ ແລ້ວພາກັນກົ້ມຂາບດ້ວຍການເຍາะເຍີ້ຍໝິ່ນປະໝາດ. ຄົນທີ່ເຄີຍຕີ ແລະ ຖົ່ມນ້ຳລາຍໃສ່ອົງເຈົ້າຊີວິດ ບັດນີ້ພາກັນຫັນໜີຈາກສາຍພຣະເນດອັນແຫຼມຄົມຂອງພຣະອົງ ແລະ ພະຍາຍາມປົບໜີຈາກແສງຣັດສະໝີອັນເຈີດຈ້າຂອງພຣະອົງ. ພວກທີ່ຕອກຕະປູໃສ່ພຣະຫັດ ແລະ ພຣະບາດຂອງພຣະອົງ, ທະຫານທີ່ແທງສີຂ້າງຂອງພຣະອົງ, ບັດນີ້ພາກັນເບິ່ງຮອຍແຜເຫຼົ່ານັ້ນດ້ວຍຄວາມຢ້ານກົວ ແລະ ຄວາມເສຍໃຈຢ່າງສຸດຊຶ້ງ. *{GC 643.2}*

ພວກປະໂຣຫິດ ແລະ ຜູ້ປົກຄອງຈື່ຈຳເຫດການທີ່ພູເຂົາຄານວາຣີຢ່າງແຈ່ມແຈ້ງໜ້າສະພຶງກົວ. ພວກເຂົາຕົວສັ່ນດ້ວຍຄວາມຫວາດຫວັ່ນ ເມື່ອລະນຶກເຖິງເຫດການທີ່ພວກເຂົາສ່າຍຫົວດ້ວຍຄວາມສະໃຈທີ່ມາຈາກຊາຕານ ແລະ ຮ້ອງອອກມາວ່າ: “ລາວຊ່ວຍຄົນອື່ນໃຫ້ພົ້ນໄດ້ ແຕ່ລາວບໍ່ສາມາດຊ່ວຍຕົນເອງໄດ້! ລາວເປັນກະສັດຂອງຊາວອິດສະຣາເອນ! ໃຫ້ລາວລົງມາຈາກໄມ້ກາງແຂນດຽວນີ້ ແລ້ວພວກເຮົາຈະເຊື່ອໃນລາວ. ລາວໄວ້ໃຈໃນພຣະເຈົ້າ ກໍໃຫ້ພຣະອົງຊ່ວຍລາວດຽວນີ້ສາ ຖ້າພຣະອົງຍັງຕ້ອງການລາວຢູ່.” (ມັດທາຍ 27:42–43 LCV). *{GC 643.3}*

ພວກເຂົາຈື່ຈຳໄດ້ຢ່າງແຈ່ມແຈ້ງ ເຖິງຄຳອຸປະມາຂອງພຣະຜູ້ຊ່ວຍໃຫ້ລອດກ່ຽວກັບພວກຊາວສວນອະງຸ່ນ ທີ່ບໍ່ຍອມສົ່ງຜົນຈາກສວນໃຫ້ແກ່ເຈົ້າຂອງ, ທັງຍັງທຳຮ້າຍຜູ້ຮັບໃຊ້ຂອງເພິ່ນ ແລະ ຂ້າລູກຊາຍຂອງເພິ່ນ. ພວກເຂົາຍັງຈື່ໄດ້ເຖິງຄຳຕັດສິນທີ່ພວກເຂົາເອງໄດ້ປະກາດອອກມາໃນຄາວນັ້ນວ່າ: ເຈົ້າຂອງສວນ “ຈະຕ້ອງລົງໂທດຄົນຊົ່ວເຫຼົ່ານັ້ນຢ່າງຮ້າຍແຮງ ແລະ ຂ້າຖິ້ມເສຍ.” (ມັດທາຍ 21:41). ເມື່ອລະນຶກເຖິງຄວາມບາບ ແລະ ການລົງໂທດຊາວສວນອະງຸ່ນທີ່ບໍ່ສັດຊື່, ພວກປະໂຣຫິດ ແລະ ພວກຄົນເຖົ້າຄົນແກ່ຈຶ່ງເຫັນວ່າ ຄຳອຸປະມານັ້ນໄດ້ສະທ້ອນເຖິງການກະທຳຂອງພວກຕົນເອງ ແລະ ຈຸດຈົບທີ່ພວກເຂົາສົມຄວນໄດ້ຮັບ. ບັດນີ້ມີສ່ຽງຮ້ອງດັງຂຶ້ນມາດ້ວຍຄວາມເຈັບປວດທີ່ສຸດ ດັງກວ່າສ່ຽງຮ້ອງ “ຈົ່ງຄຶງລາວທີ່ໄມ້ກາງແຂນ, ຈົ່ງຄຶງລາວທີ່ໄມ້ກາງແຂນ” ເຊິ່ງເຄີຍດັງກ້ອງຕາມຖະໜົນຫົນທາງໃນນະຄອນເຢຣູຊາເລັມນັ້ນ. ສ່ຽງຮ້ອງຄວນຄາງດ້ວຍຄວາມສິ້ນຫວັງດັງກ້ອງຂຶ້ນວ່າ “ພຣະເຢຊູແມ່ນພຣະບຸດຂອງພຣະເຈົ້າ! ພຣະອົງແມ່ນພຣະເມຊີອາຕົວຈິງ!” ພວກເຂົາພະຍາຍາມໜີຈາກພຣະອົງ ຜູ້ຊົງເປັນກະສັດເໜືອກະສັດທັງປວງ ແລະ ພະຍາຍາມຫຼົບລີ້ຢູ່ຕາມຖ້ຳ ແລະ ຫຼຶບຫີນທີ່ປາກົດຫຼັງຈາກແຜ່ນດິນໄຫວ, ແຕ່ບໍ່ມີປະໂຫຍດ. *{GC 643.4}*

ໃນຊີວິດຂອງທຸກຄົນທີ່ປະຕິເສດຄວາມຈິງ ມີບາງຄັ້ງທີ່ຮູ້ສຳນຶກເຖິງຄວາມຈິງນັ້ນ ແລະ ເມື່ອລະນຶກເຖິງຊີວິດທີ່ໜ້າໄຫວ້ຫຼັງຫຼອກ ກໍເຮັດໃຫ້ມີຄວາມທຸກຍ້ອນຄວາມເສຍໃຈທີ່ບໍ່ເກີດປະໂຫຍດ. ແຕ່

ສິ່ງເຫຼົ່ານີ້ບໍ່ສາມາດທຽບໄດ້ກັບຄວາມເສຍໃຈໃນວັນນັ້ນ “ເມື່ອຄວາມຢ້ານອັນໃຫຍ່ມາກະທົບ . . . ດັ່ງລົມພະຍຸກ້າ.” (ສຸພາສິດ 1:27). ບັດນີ້ຜູ້ທີ່ເຄີຍຢາກທຳລາຍພຣະຄຣິສ ແລະ ໄພ່ພົນທີ່ສັດຊື່ຂອງພຣະອົງ ໄດ້ເຫັນສະຫງ່າຣາສີຂອງພຣະອົງ ແລະ ແສງຣັດສະໝີທີ່ອ້ອມຮອບຄົນຂອງພຣະອົງ. ຄົນທີ່ປະຕິເສດຄວາມຈິງຟັງດ້ວຍຄວາມຢ້ານກົວ ໃນຂະນະທີ່ໄພ່ພົນຂອງພຣະເຈົ້າຮ້ອງອອກມາດ້ວຍຄວາມຊື່ນຊົມຍິນດີວ່າ: “ນີ້ແຫຼະຄືພຣະເຈົ້າຂອງເຮົາ; ເຮົາໄດ້ຄອຍທ່າພຣະອົງ ແລະ ພຣະອົງຈະຊົ່ວຊ່ວຍເຮົາ ໃຫ້ລອດ.” (ເອຊາຢາ 25:9 TH1940). *{GC 644.1}*

ຄົນຊອບທຳຟື້ນຈາກຄວາມຕາຍ

ໃນຂະນະທີ່ແຜ່ນດິນໂລກສັ່ນສະເທືອນ, ຟ້າແມບເຫຼື້ອມ ແລະ ສຽງຟ້າຮ້ອງກຶກກ້ອງ, ພຣະບຸດຂອງພຣະເຈົ້າຊົງເອີ້ນໄພ່ພົນຜູ້ລ່ວງລັບໄປແລ້ວໃຫ້ຕື່ນຂຶ້ນ. ພຣະອົງຫຼຽວເບິ່ງອຸບມຸງຝັງສົບຂອງຜູ້ຊອບທຳ ແລະ ຊົງຊູພຣະຫັດຂຶ້ນສູ່ສະຫວັນ ແລ້ວຊົງຮ້ອງວ່າ: “ຈົ່ງຕື່ນເຖີດ, ຈົ່ງຕື່ນ, ຈົ່ງຕື່ນຂຶ້ນ, ເຈົ້າທັງຫຼາຍຜູ້ທີ່ນອນຫຼັບຢູ່ໃນຂີ້ຝຸ່ນດິນເອີຍ, ຈົ່ງລຸກຂຶ້ນ!” ທົ່ວທຸກມຸມໂລກ ຄົນຕາຍຈະໄດ້ຍິນສຽງນັ້ນ ແລະ ຜູ້ທີ່ໄດ້ຍິນກໍຈະມີຊີວິດຂຶ້ນມາ. ທົ່ວແຜ່ນດິນໂລກ ຈະກ້ອງກັງວານດ້ວຍສຽງຝີກ້າວຂອງກອງທັບອັນຍິ່ງໃຫຍ່ ປະກອບດ້ວຍຄົນທຸກຊາດ, ທຸກຕະກູນ, ທຸກພາສາ ແລະ ທຸກຊົນເຜົ່າ. ພວກເຂົາອອກມາຈາກຂຸມຝັງສົບ ນຸ່ງຫົ່ມດ້ວຍສະຫງ່າຣາສີອັນບໍ່ຮູ້ຈັກຕາຍ ແລະ ພາກັນຮ້ອງວ່າ: “ໂອ ຄວາມຕາຍເອີຍ, ໄຊຊະນະຂອງມຶງຢູ່ໃສ? ໂອ ຄວາມຕາຍເອີຍ, ໄລພິດຂອງມຶງຢູ່ໃສ?” (1 ໂກຣິນໂທ 15:55). ຈາກນັ້ນ, ຜູ້ຊອບທຳທີ່ຍັງມີຊີວິດຢູ່ກັບຄົນຂອງພຣະເຈົ້າທີ່ຟື້ນຄືນຊີບແລ້ວ ຈະພາກັນປະສານສຽງໂຮ່ຮ້ອງ ແລະ ຈະລາກສຽງຍາວດ້ວຍຄວາມຊົມຊື່ນຍິນດີໃນໄຊຊະນະ. *{GC 644.2}*

ທຸກຄົນທີ່ຟື້ນຈາກຄວາມຕາຍ ຍັງຄົງມີຄວາມສູງເທົ່າກັບຕອນທີ່ເສຍຊີວິດ. ອາດາມຈະຢືນຢູ່ທ່າມກາງຝູງຊົນທີ່ຟື້ນຄືນຊີບ ມີຮູບຮ່າງສູງໃຫຍ່ສະຫງ່າງາມ ຕ່ຳກວ່າພຣະບຸດຂອງພຣະເຈົ້າພຽງເລັກນ້ອຍ. ເມື່ອປຽບທຽບກັບຄົນລຸ້ນຫຼັງ ເພິ່ນມີຄວາມແຕກຕ່າງຢ່າງເຫັນໄດ້ຊັດ ເຊິ່ງສະແດງໃຫ້ເຫັນເຖິງຄວາມຊຸດໂຊມຂອງມະນຸດຊາດ. ເຖິງຢ່າງໃດກໍຕາມ, ທຸກຄົນຟື້ນຂຶ້ນມາດ້ວຍຄວາມສົດຊື່ນ ແລະ ພະລັງຂອງໄວໜຸ່ມທີ່ຈະບໍ່ມີວັນແກ່ຊະລາອີກຕະຫຼອດໄປ. ໃນປະຖົມມະການ ມະນຸດຖືກສ້າງຕາມພຣະລັກສະນະຂອງພຣະເຈົ້າ ບໍ່ພຽງແຕ່ດ້ານອຸປະນິໄສເທົ່ານັ້ນ ແຕ່ທັງຮູບຮ່າງໜ້າຕາດ້ວຍ. ຄວາມບາບໄດ້ທຳລາຍພຣະລັກສະນະຂອງພຣະເຈົ້າ ແລະ ເກືອບຈະລຶບລ້າງພຣະລັກສະນະຂອງພຣະອົງອອກໄປໝົດ ແຕ່ພຣະຄຣິສສະເດັດມາ ເພື່ອຟື້ນຟູສິ່ງທີ່ເສຍໄປນັ້ນໃຫ້ກັບຄືນສະພາບດັ້ງເດີມ. ພຣະອົງຈະປ່ຽນແປງຮ່າງກາຍອັນເສື່ອມໂຊມຂອງພວກເຮົາ ໃຫ້ເປັນເໝືອນພຣະກາຍອັນເຕັມໄປດ້ວຍສະຫງ່າຣາສີຂອງພຣະອົງ. ຮ່າງກາຍທີ່ຕ້ອງຕາຍ, ເປື່ອຍເນົ່າປາສະຈາກຄວາມງົດງາມ ແລະ ເຄີຍເປິເປື້ອນດ້ວຍຄວາມບາບ ຈະກາຍເປັນຮ່າງກາຍທີ່ອະມະຕະ, ງົດງາມ ແລະ ສົມບູນແບບ. ຄວາມບໍ່ສົມບູນ ແລະ ຄວາມຜິດປົກກະຕິທັງໝົດຖືກປະໄວ້ໃນຂຸມຝັງສົບ. ເມື່ອກັບຄືນສູ່ຕົ້ນໄມ້ແຫ່ງຊີວິດໃນສວນເອເດນທີ່ສູນເສຍໄປດົນນານ, ຜູ້ທີ່ໄດ້ຮັບການໄຖ່ຈະ “ຈຳເລີນໃຫຍ່” (ມາລາກີ 4:2 ສະບັບລາວບູຮານ) ຈົນເຖິງຄວາມສູງໃຫຍ່ຂອງມະນຸດຊາດໃນສະພາບອັນດັ້ງເດີມ. ຮ່ອງຮອຍສຸດທ້າຍຂອງຄຳສາບແຊ່ງຈາກຄວາມບາບ ຈະຖືກກຳຈັດອອກໄປ ແລະ ຜູ້ທີ່ສັດຊື່ຕໍ່ພຣະຄຣິສ ຈະປາກົດດ້ວຍຄວາມງົດງາມແຫ່ງອົງພຣະຜູ້ເປັນເຈົ້າຂອງພວກເຮົາ. ທັງດ້ານຈິດໃຈ, ຈິດວິນຍານ ແລະ ຮ່າງກາຍ ຈະສະທ້ອນເຖິງພຣະລັກສະນະອັນສົມບູນແບບຂອງພຣະອົງ. ການໄຖ່ມະນຸດໃຫ້ລອດພົ້ນນັ້ນ ໜ້າ

ອັດສະຈັນແທ້! ມີການເວົ້າເຖິງການຊົງໄຖ່ມາເປັນເວລາດົນນານ, ມີການເຝົ້າຫວັງ ແລະ ການໄຕ່ຕອງເຖິງການຊົງໄຖ່ມາດົນແລ້ວ, ມີການເຝົ້າລໍຄອຍດ້ວຍໃຈຈົດຈໍ່, ແຕ່ບໍ່ເຄີຍມີຜູ້ໃດເຂົ້າໃຈຢ່າງເລິກເຊິ່ງ. *{GC 644.3}*

ຄົນຊອບທຳທີ່ຍັງມີຊີວິດຢູ່ກໍຖືກປ່ຽນແປງ "ໃນຊົ່ວຂະນະດຽວ ໃນຊົ່ວພັບຕາດຽວ." (1 ໂກຣິນໂທ 15:52). ເມື່ອໄດ້ຍິນພຣະສຸຣະສຽງຂອງພຣະເຈົ້າ ພວກເຂົາໄດ້ຮັບສະຫງ່າຣາສີ; ບັດນີ້, ພວກເຂົາຖືກປ່ຽນໃຫ້ມີສະພາບອະມະຕະ ແລະ ຖືກຮັບຂຶ້ນໄປໃນອາກາດພ້ອມກັບບັນດາໄພ່ພົນທີ່ຟື້ນຄືນຊີວິດ ເພື່ອພົບກັບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ. ເຫຼົ່າທູດສະຫວັນອອກໄປ "ຮວບຮວມເອົາປະຊາຊົນຂອງພຣະເຈົ້າ ທີ່ພຣະອົງໄດ້ເລືອກໄວ້ຈາກລົມທິດທັງສີ່ ຕັ້ງແຕ່ສຸດຂອບຟ້າເບື້ອງນີ້ ຈົນເຖິງສຸດຂອບຟ້າເບື້ອງນັ້ນ." (ມັດທາຍ 24:31). ທູດສະຫວັນບໍຣິສຸດອຸ້ມເອົາເດັກນ້ອຍໄປຫາອ້ອມກອດຂອງຜູ້ເປັນແມ່. ໝູ່ເພື່ອນທີ່ຕ້ອງພັດພາກກັນເນື່ອງຈາກຄວາມຕາຍ ໄດ້ກັບມາພົບກັນອີກ ແລະ ຈະບໍ່ຕ້ອງພາກຈາກກັນອີກຕໍ່ໄປ. ຄົນຊອບທຳຮ້ອງເພງຢ່າງຊື່ນບານ ໃນຂະນະທີ່ພວກເຂົາຂຶ້ນສູ່ນະຄອນຂອງພຣະເຈົ້າ. *{GC 645.1}*

ມີປີກຢູ່ສອງຂ້າງຂອງລົດຮົບທີ່ເປັນເມກ ແລະ ມີລໍ້ອັນມີຊີວິດຢູ່ທາງລຸ່ມ. ຂະນະທີ່ລົດຮົບເລື່ອນຂຶ້ນສູ່ເບື້ອງເທິງ, ລໍ້ກໍຮ້ອງວ່າ "ບໍຣິສຸດ." ສ່ວນປີກກໍຮ້ອງວ່າ "ບໍຣິສຸດ" ແລະ ເຫຼົ່າທູດສະຫວັນກໍຮ້ອງວ່າ "ບໍຣິສຸດ, ບໍຣິສຸດ, ບໍຣິສຸດ, ອົງພຣະຜູ້ເປັນເຈົ້າຜູ້ຊົງຣິດທານຸພາບສູງສຸດ." ຂະນະທີ່ລົດຮົບເຄື່ອນໄປສູ່ນະຄອນເຢຣູຊາເລັມໃໝ່, ຜູ້ທີ່ໄດ້ຮັບການໄຖ່ກໍໂຮ່ຮ້ອງວ່າ "ຮາເລລູຢາ!" *{GC 645.2}*

ຄົນຊອບທຳເຂົ້ານະຄອນບໍຣິສຸດ

ກ່ອນການສະເດັດເຂົ້ານະຄອນຂອງພຣະເຈົ້າ, ພຣະຜູ້ຊ່ວຍໃຫ້ລອດຊົງມອບເຄື່ອງໝາຍແຫ່ງໄຊ-ຊະນະ ແລະ ສັນຍະລັກແຫ່ງກະສັດໃຫ້ແກ່ຜູ້ຕິດຕາມພຣະອົງ. ທຸກຄົນເປັ່ງປະກາຍ ແລະ ຖືກຈັດເປັນຮູບສີ່ແຈອ້ອມອົງພຣະຣາຊາຂອງພວກເຂົາ. ພຣະອົງປະທັບສູງເໜືອບັນດາໄພ່ພົນຜູ້ບໍຣິສຸດ ແລະ ເຫຼົ່າທູດສະຫວັນ; ພຣະພັກຂອງພຣະອົງສ່ອງແສງເຕັມດ້ວຍຄວາມຮັກອັນອ່ອນໂຍນ. ທ່າມກາງຝູງຊົນອັນນັບບໍ່ຖ້ວນຂອງຜູ້ທີ່ໄດ້ຮັບການຊົງໄຖ່, ທຸກສາຍຕາຈັບຈ້ອງຢູ່ທີ່ພຣະອົງ, ທຸກຄົນເບິ່ງສະຫງ່າຣາສີຂອງພຣະອົງ ຜູ້ທີ່ເຄີຍທົນຕໍ່ການເສຍໂສມຈົນ "ເກືອບບໍ່ຄືມະນຸດ." (ເອຊາຢາ 52:14). ພຣະເຢຊູຊົງສວມມົງກຸດແຫ່ງສະຫງ່າຣາສີເທິງຫົວຂອງຜູ້ມີໄຊດ້ວຍພຣະຫັດຂວາຂອງພຣະອົງເອງ. ແຕ່ລະຄົນໄດ້ຮັບມົງກຸດທີ່ມີ "ຊື່ໃໝ່" ຂອງຕົນ. (ເບິ່ງ ພຣະນິມິດ 2:17). ໃນມົງກຸດເຫຼົ່ານັ້ນມີຄຳຈາລຶກໄວ້ວ່າ "ບໍຣິສຸດແດ່ພຣະຜູ້ເປັນເຈົ້າ." ທຸກຄົນຖືກ້ານຕານແຫ່ງໄຊຊະນະ ແລະ ພິນອັນເປັ່ງປະກາຍ. ເມື່ອພວກຫົວໜ້າທູດສະຫວັນໃຫ້ສັນຍານ, ທຸກຄົນດີດສາຍພິນດ້ວຍຄວາມຊຳນານ ແລະ ບັນເລງທຳນອງດົນຕີອັນໄພເລາະຢ່າງມ່ວນຊື່ນ. ຄວາມປິຕິຍິນດີເໜືອຄຳບັນລະຍາຍເຕັມລົ້ນຢູ່ໃນຈິດໃຈທຸກຄົນ, ທຸກຄົນຮ້ອງສັນລະເສີນດ້ວຍຄວາມຮູ້ສຶກຂອບພຣະຄຸນວ່າ: "ແດ່ພຣະອົງຜູ້ຮັກພວກເຮົາທັງຫຼາຍ ແລະ ໄດ້ປົດປ່ອຍພວກເຮົາໃຫ້ພົ້ນຈາກຄວາມບາບຂອງພວກເຮົາໂດຍໂລຫິດຂອງພຣະອົງ, ແລະ ພຣະອົງໄດ້ຕັ້ງພວກເຮົາໃຫ້ເປັນອານາຈັກ ແລະ ເປັນປະໂຣຫິດ ເພື່ອຮັບໃຊ້ພຣະເຈົ້າ ແລະ ພຣະບິດາຂອງພຣະອົງ, ຂໍໃຫ້ກຽດ ແລະ ຣິດອຳນາດຈົ່ງມີແກ່ພຣະອົງຕະຫຼອດໄປເປັນນິດ!" (ພຣະນິມິດ 1:5–6 LCV). *{GC 645.3}*

ນະຄອນສັກສິດຢູ່ຕໍ່ໜ້າຝູງຊົນທີ່ໄດ້ຮັບການໄຖ່; ພຣະເຢຊູຊົງເປີດປະຕູໄຂ່ມຸກໃຫ້ກວ້າງ ແລະ ບັນດາປະຊາຊາດທີ່ໄດ້ຮັກສາຄວາມຈິງກໍເຂົ້າໄປ. ທີ່ນັ້ນພວກເຂົາໄດ້ເຫັນສວນເອເດນຂອງພຣະເຈົ້າ, ເຊິ່ງເປັນບ້ານຂອງອາດາມກ່ອນທີ່ເພິ່ນຈະຕົກສູ່ຄວາມບາບ. ແລ້ວສຽງທີ່ໄພເລາະກວ່າດົນຕີໃດ ໆ ທີ່ຫູມະນຸດເຄີຍ

ໄດ້ຍິນກໍດັງຂຶ້ນວ່າ: “ການຕໍ່ສູ້ຂອງພວກເຈົ້າໄດ້ສິ້ນສຸດແລ້ວ.” “ມາເທີ້ນ, ພວກເຈົ້າຜູ້ທີ່ໄດ້ຮັບພອນຈາກພຣະບິດາຂອງເຮົາ ຈົ່ງມາຮັບເອົາມໍລະດົກຂອງເຈົ້າ, ອານາຈັກທີ່ໄດ້ຈັດຕຽມໄວ້ສຳລັບພວກເຈົ້າຕັ້ງແຕ່ສ້າງໂລກ.” (ມັດທາຍ 25:34 LCV). {GC 646.1}

ບັດນີ້, ຄຳອະທິຖານຂອງພຣະຜູ້ຊ່ວຍໃຫ້ລອດ ທີ່ທູນຂໍເພື່ອພວກສາວົກຂອງພຣະອົງໄດ້ສຳເລັດແລ້ວ: “ຂ້ານ້ອຍປາຖະໜາໃຫ້ບັນດາຜູ້ທີ່ພຣະອົງໄດ້ມອບໃຫ້ແກ່ຂ້ານ້ອຍນັ້ນ ໄດ້ຢູ່ກັບຂ້ານ້ອຍໃນບ່ອນທີ່ຂ້ານ້ອຍຢູ່” (ໂຢຮັນ 17:24 LCV). ພວກເຂົາ “ຢູ່ຕໍ່ໜ້າສະຫງ່າຣາສີຂອງພຣະອົງ ໂດຍບໍ່ມີຕຳໜິ ແລະ ດ້ວຍຄວາມຊື່ນຊົມຍິນດີອັນໃຫຍ່.” (ຢູດາ 1:24 LCV). ພຣະຄຣິສຊົງນຳພາຜູ້ທີ່ພຣະອົງຊົງໄຖ່ໄວ້ດ້ວຍພຣະໂລຫິດຂອງພຣະອົງ ມາສະແດງຕໍ່ພຣະບິດາ ໂດຍປະກາດວ່າ: “ຂ້າພຣະອົງຢູ່ທີ່ນີ້ ພ້ອມກັບລູກທັງຫຼາຍທີ່ພຣະອົງຊົງມອບໃຫ້ແກ່ຂ້າພຣະອົງ.” “ຂ້າພຣະອົງໄດ້ຮັກສາທຸກຄົນທີ່ພຣະອົງຊົງມອບໃຫ້ແກ່ຂ້າພຣະອົງ.” ໂອ້ ຄວາມອັດສະຈັນແຫ່ງຄວາມຮັກຂອງພຣະເຈົ້າ ທີ່ຊົງໄຖ່ພວກເຮົາໃຫ້ລອດ! ຄວາມປິຕິຍິນດີໃນເວລານັ້ນຈະຍິ່ງໃຫຍ່ເກີນການບັນລະຍາຍ ເມື່ອພຣະບິດາອົງນິຣັນຊົງເບິ່ງຜູ້ທີ່ໄດ້ຮັບການໄຖ່ ແລ້ວເຫັນພຣະລັກສະນະຂອງພຣະອົງເອງ; ຄວາມວຸ້ນວາຍຂອງຄວາມບາບຖືກຂັບໄລ່ໜີໄປ, ຄວາມເສື່ອມໂຊມຖືກກຳຈັດອອກໄປ ແລະ ມະນຸດໄດ້ກັບຄືນສູ່ຄວາມກົມກຽວກັນກັບພຣະເຈົ້າອີກຄັ້ງໜຶ່ງ! {GC 646.2}

ດ້ວຍຄວາມຮັກທີ່ບໍ່ສາມາດບັນລະຍາຍໄດ້ ພຣະເຢຊູຊົງຕ້ອນຮັບຜູ້ທີ່ສັດຊື່ຂອງພຣະອົງ ເຂົ້າສູ່ຄວາມຊົມຊື່ນຍິນດີຂອງອົງພຣະຜູ້ເປັນເຈົ້າ. ຄວາມສຸກຂອງພຣະອົງ ແມ່ນການໄດ້ເຫັນບັນດາຜູ້ທີ່ໄດ້ຮັບການໄຖ່ຜ່ານຄວາມທຸກທໍລະມານ ແລະ ການຖ່ອມພຣະອົງລົງ ຢູ່ໃນຣາຊອານາຈັກແຫ່ງສະຫງ່າຣາສີ. ບັນດາຜູ້ທີ່ໄດ້ຮັບການໄຖ່ຈະມີສ່ວນໃນຄວາມຊົມຊື່ນຍິນດີຂອງພຣະອົງ ເມື່ອພວກເຂົາໄດ້ເຫັນຜູ້ທີ່ພວກເຂົາໄດ້ນຳມາຫາພຣະຄຣິສດ້ວຍການອະທິຖານ, ການຮັບໃຊ້ ແລະ ການເສຍສະຫຼະດ້ວຍຄວາມຮັກ. ເມື່ອພວກເຂົາມາເຕົ້າໂຮມກັນອ້ອມບັນລັງໃຫຍ່ສີຂາວ, ຈິດໃຈຂອງພວກເຂົາຈະເຕັມລົ້ນໄປດ້ວຍຄວາມປິຕິຍິນດີທີ່ບໍ່ອາດບັນລະຍາຍໄດ້. ຈະເປັນຄວາມສຸກອັນໃຫຍ່ຫຼວງ ເມື່ອພວກເຂົາໄດ້ເຫັນບັນດາຜູ້ທີ່ຕົນໄດ້ນຳມາຫາພຣະຄຣິສ ແລະ ເຫັນວ່າຄົນໜຶ່ງໄດ້ນຳພາຜູ້ອື່ນ, ແລ້ວຄົນເຫຼົ່ານັ້ນກໍໄດ້ນຳພາຄົນອື່ນ ໆ ອີກ. ທຸກຄົນໄດ້ເຂົ້າມາເຖິງບ່ອນພັກສະຫງົບແລ້ວ ຈະພາກັນວາງມົງກຸດໄວ້ທີ່ພຣະບາດຂອງພຣະເຢຊູ ແລະ ສັນລະເສີນພຣະອົງຕະຫຼອດຊົ່ວນິຣັນດອນ. {GC 647.1}

ອາດາມທັງສອງພົບກັນ

ໃນຂະນະທີ່ບັນດາຜູ້ທີ່ໄດ້ຮັບການໄຖ່ ໄດ້ຮັບການຕ້ອນຮັບເຂົ້າສູ່ນະຄອນຂອງພຣະເຈົ້າ ມີສຽງສັນລະເສີນດ້ວຍຄວາມປິຕິຍິນດີດັງກ້ອງຂຶ້ນ; ອາດາມທັງສອງ[1] ກຳລັງຈະພົບກັນ. ພຣະບຸດຂອງພຣະເຈົ້າຊົງຢືນອ້າແຂນ ເພື່ອຕ້ອນຮັບບັນພະບຸລຸດຂອງມວນມະນຸດ ຜູ້ທີ່ພຣະອົງໄດ້ຊົງສ້າງຂຶ້ນມາ, ຜູ້ທີ່ໄດ້ເຮັດບາບຕໍ່ພຣະຜູ້ສ້າງ ແລະ ຍ້ອນບາບຂອງຕົນ ຮອຍບາດແຜຈາກການຖືກຄຶງທີ່ໄມ້ກາງແຂນ ຈຶ່ງຍັງປາກົດຢູ່ເທິງພຣະກາຍຂອງພຣະຜູ້ຊ່ວຍໃຫ້ລອດ. ເມື່ອອາດາມເຫັນຮອຍຕະປູ ເພິ່ນບໍ່ໄດ້ແລ່ນໄປກອດອົງພຣະຜູ້ເປັນເຈົ້າຂອງຕົນ, ແຕ່ດ້ວຍຄວາມຖ່ອມຕົວ ເພິ່ນກໍກົ້ມຂາບລົງທີ່ພຣະບາດຂອງພຣະອົງ ແລະ ຮ້ອງຂຶ້ນວ່າ: “ພຣະເມສານ້ອຍຜູ້ຖືກຂ້າ ຊົງສົມຄວນ, ຊົງສົມຄວນ!” ພຣະຜູ້ຊ່ວຍໃຫ້ລອດຊົງປະຄອງເພິ່ນຂຶ້ນດ້ວຍຄວາມອ່ອນໂຍນ ແລະ ຊົງບອກໃຫ້ເພິ່ນເບິ່ງສວນເອເດນທີ່ເຄີຍເປັນບ້ານຂອງເພິ່ນ ກ່ອນທີ່ຈະຖືກຂັບໄລ່ອອກໄປເປັນເວລາດົນນານ. {GC 647.2}

[1] ອາດາມທີສອງຄືພຣະເຢຊູຕາມພຣະທຳໂຣມ 5:12–19.

ຫຼັງຈາກຖືກຂັບໄລ່ອອກຈາກສວນເອເດນ, ຊີວິດຂອງອາດາມກໍເຕັມໄປດ້ວຍຄວາມໂສກເສົ້າ. ທຸກຄັ້ງທີ່ເຫັນໃບໄມ້ແຫ້ງຕາຍແລ້ວລ່ວງຫຼົ່ນລົງມາ, ທຸກຄັ້ງທີ່ເຫັນສັດທີ່ຖືກຂ້າບູຊາ, ທຸກຄັ້ງທີ່ເຫັນທຳມະຊາດທີ່ງົດງາມນັ້ນເສື່ອມໂຊມລົງ ແລະ ທຸກຄັ້ງທີ່ເຫັນຮອຍມົນທິນບາບໃນອຸປະນິໄສຂອງມະນຸດ ລ້ວນແຕ່ເຕືອນໃຫ້ເພີ່ນລະນຶກເຖິງຄວາມບາບຂອງຕົນ. ເພີ່ນໄດ້ຮັບຄວາມທຸກທໍລະມານຫຼາຍທີ່ສຸດ ເມື່ອເຫັນຄວາມຊົ່ວຊ້າທີ່ເພີ່ມທະວີຂຶ້ນ ແລະ ເມື່ອເພີ່ນຕັກເຕືອນຄົນອື່ນ ພວກເຂົາກໍຕອບກັບມາດ້ວຍການປະນາມວ່າ ເພີ່ນເປັນຕົ້ນເຫດຂອງຄວາມບາບ. ອາດາມທົນຕໍ່ບົດລົງໂທດດ້ວຍຄວາມຖ່ອມໃຈເປັນເວລາເກືອບພັນປີ. ເພີ່ນໄດ້ກັບໃຈຈາກຄວາມບາບຢ່າງສັດຊື່ ແລະ ໄວ້ວາງໃຈໃນຄຸນຄວາມດີຂອງພຣະຜູ້ຊ່ວຍໃຫ້ລອດທີ່ຊົງສັນຍາໄວ້ ຈົນໃນທີ່ສຸດເພີ່ນເຖິງແກ່ຄວາມຕາຍດ້ວຍຄວາມຫວັງໃນການຟື້ນຄືນຊີບ. ພຣະບຸດຂອງພຣະເຈົ້າຊົງໄຖ່ຄວາມຜິດພາດ ແລະ ການລົ້ມລົງໃນຄວາມບາບຂອງມະນຸດ. ບັດນີ້, ຜ່ານຂະບວນການລຶບລ້າງຄວາມບາບ, ອາດາມໄດ້ກັບຄືນສູ່ອານາເຂດປົກຄອງດັ້ງເດີມຂອງເພີ່ນ. *{GC 647.3}*

ດ້ວຍຄວາມປິຕິຍິນດີຢ່າງລົ້ນເຫຼືອ, ອາດາມໄດ້ເຫັນຕົ້ນໄມ້ທີ່ເຄີຍເປັນຄວາມມ່ວນຊື່ນຂອງເພີ່ນແຕ່ກ່ອນ ຄືຕົ້ນໄມ້ທີ່ເພີ່ນເອງເຄີຍເກັບໝາກໄມ້ໃນຍາມທີ່ເພີ່ນຍັງບໍຣິສຸດ ກ່ອນທີ່ຄວາມທຸກຈະເຂົ້າມາ. ເພີ່ນເຫັນເຄືອອະງຸ່ນທີ່ມືຂອງເພີ່ນເອງໄດ້ບົ່ວລະບັດຮັກສາ ແລະ ດອກໄມ້ທີ່ເພີ່ນເຄີຍມີຄວາມສຸກໃນການເບິ່ງແຍງລ້ຽງດູ. ເພີ່ນເຂົ້າໃຈເຖິງຄວາມຈິງຂອງສິ່ງທີ່ເຫັນຢູ່ຕໍ່ໜ້າ ແລະ ຮູ້ວ່ານີ້ແມ່ນສວນເອເດນທີ່ຖືກຟື້ນຟູຄືນມາໃໝ່ ໂດຍມີຄວາມງົດງາມຫຼາຍກວ່າຕອນທີ່ເພີ່ນຖືກຂັບໄລ່ອອກໄປ. ພຣະຜູ້ຊ່ວຍໃຫ້ລອດພາເພີ່ນໄປຫາຕົ້ນໄມ້ແຫ່ງຊີວິດ ແລ້ວເດັດໝາກໄມ້ອັນສວຍງາມມາໃຫ້ເພີ່ນກິນ. ອາດາມຫຼຽວເບິ່ງອ້ອມຮອບ ແລະ ເຫັນເຊື້ອສາຍຂອງເພີ່ນຈຳນວນຫຼວງຫຼາຍທີ່ໄດ້ຮັບການໄຖ່ແລ້ວ ກຳລັງຢືນຢູ່ໃນສວນເອເດນແຫ່ງສະຫວັນ. ແລ້ວເພີ່ນໄດ້ວາງມົງກຸດອັນເປັ່ງປະກາຍຂອງຕົນລົງທີ່ພຣະບາດຂອງພຣະເຢຊູ, ແລ້ວຟຸບຕົວລົງທີ່ພຣະຊອງຂອງພຣະຜູ້ໄຖ່ ແລະ ສວມກອດພຣະອົງໄວ້. ຈາກນັ້ນ, ເພີ່ນກໍດີດພິນຄຳ ແລະ ສຽງເພງແຫ່ງໄຊຊະນະກໍດັງກ້ອງກັງວານໄປທົ່ວສະຫວັນວ່າ: “ພຣະເມສານ້ອຍຜູ້ຖືກຂ້າ ແລະ ຊົງພຣະຊົນຢູ່ ຊົງສົມຄວນ, ຊົງສົມຄວນ, ຊົງສົມຄວນ!” ເຊື້ອສາຍຂອງອາດາມຮ່ວມຮ້ອງເພງນຳ ແລະ ທຸກຄົນວາງມົງກຸດຂອງຕົນເອງລົງທີ່ພຣະບາດຂອງພຣະຜູ້ຊ່ວຍໃຫ້ລອດ ໃນຂະນະທີ່ພວກເຂົາກົ້ມຂາບນະມັດສະການພຣະອົງ. *{GC 648.1}*

ເຫຼົ່າທູດສະຫວັນມາເປັນພະຍານໃນການພົບພໍ້ກັນຄັ້ງນີ້, ພວກເພີ່ນເຄີຍຮ້ອງໄຫ້ຕອນອາດາມລົ້ມລົງໃນຄວາມບາບ ແລະ ມີຄວາມຊົມຊື່ນຍິນດີ ເມື່ອພຣະເຢຊູຄືນພຣະຊົນແລ້ວສະເດັດຂຶ້ນສູ່ສະຫວັນ ຫຼັງຈາກທີ່ພຣະອົງຊົງຊະນະຄວາມຕາຍເພື່ອທຸກຄົນທີ່ເຊື່ອໃນພຣະນາມຂອງພຣະອົງ. ບັດນີ້, ພວກເພີ່ນໄດ້ເຫັນວຽກງານແຫ່ງການຊົງໄຖ່ສຳເລັດຄົບຖ້ວນແລ້ວ ຈຶ່ງຮ່ວມກັນຮ້ອງເພງສັນລະເສີນ. *{GC 648.2}*

ທາຍາດຂອງພຣະເຈົ້າຮັບມໍລະດົກ

“ບັນດາຄົນທີ່ມີໄຊຕໍ່ສັດຮ້າຍ ແລະ ຮູບຂອງມັນ ແລະ ເຄື່ອງໝາຍຂອງມັນ ແລະ ເລກປະຈຳຊື່ຂອງມັນ” ໄດ້ຮວມກັນຢູ່ເທິງທະເລແກ້ວຕໍ່ໜ້າບັນລັງຂອງພຣະເຈົ້າ. ທະເລແກ້ວນັ້ນເຫຼື້ອມເໝືອນດັ່ງປະສົມກັບໄຟ ແລະ ສະຫວ່າງສະໄຫວດ້ວຍຣັດສະໝີພາບຂອງພຣະເຈົ້າ. ພວກເຂົາໄປຢືນຢູ່ກັບພຣະເມສານ້ອຍເທິງພູເຂົາຊີໂອນ “ຖືພິນ . . . ຂອງພຣະເຈົ້າ,” ເປັນກຸ່ມຄົນ 144,000 ຄົນທີ່ໄດ້ຮັບການໄຖ່ຈາກທ່ານກາງມະນຸດທັງປວງ. ແລ້ວກໍມີສຽງດັງຂຶ້ນເໝືອນນ້ຳຕົກຕາດໃຫຍ່ ແລະ ເໝືອນສຽງຟ້າຮ້ອງຄື “ສຽງທີ່ບັນດານັກດີດພິນກຳລັງບັນເລງຢູ່.” ພວກເຂົາຮ້ອງເພງໃໝ່ຕໍ່ໜ້າບັນລັງ ເປັນເພງທີ່ບໍ່ມີຜູ້ໃດສາມາດຮຽນໄດ້ ນອກຈາກຄົນກຸ່ມ 144,000 ຄົນເທົ່ານັ້ນ. ມັນເປັນເພງຂອງໂມເຊ ແລະ ພຣະເມສານ້ອຍ ກໍຄືເພງ

ແຫ່ງການຊ່ວຍກູ້. ມີແຕ່ຄົນກຸ່ມ 144,000 ຄົນເທົ່ານັ້ນທີ່ສາມາດຮຽນເພງນີ້ໄດ້ ເພາະມັນເປັນເພງແຫ່ງ ປະສົບການຂອງພວກເຂົາເອງ ອັນເປັນປະສົບການທີ່ບໍ່ມີຄົນກຸ່ມອື່ນເຄີຍມີມາກ່ອນ. “ພວກເຂົາຕິດຕາມ ລູກແກະຂອງພຣະເຈົ້າໄປທຸກບ່ອນທີ່ພຣະອົງໄປ.” ຄົນເຫຼົ່ານີ້ໄດ້ຖືກຮັບຂຶ້ນສະຫວັນໃນຂະນະທີ່ຍັງມີຊີວິດຢູ່ ແລະ ຖືກນັບວ່າເປັນ “ຜົນທຳອິດຖວາຍແກ່ພຣະເຈົ້າ ແລະ ລູກແກະຂອງພຣະເຈົ້າ.” “ຄົນເຫຼົ່ານີ້ ແມ່ນ ພວກທີ່ໄດ້ຜ່ານການຖືກຂົ່ມເຫັງຢ່າງໜັກ.” ພວກເຂົາໄດ້ຜ່ານຊ່ວງເວລາແຫ່ງຄວາມທຸກຍາກລຳບາກທີ່ ບໍ່ເຄີຍມີມາຕັ້ງແຕ່ມີຊົນຊາດໃດ ໆ ໃນໂລກ, ໄດ້ອົດທົນຕໍ່ຄວາມທຸກທໍລະມານໃຈໃນເວລາທຸກຍາກຂອງ ຢາໂຄບ ແລະ ໄດ້ຢືນຢູ່ໂດຍບໍ່ມີຜູ້ອ້ອນວອນແທນ ໃນຊ່ວງການຖອກເທພຣະພິໂຣດຂອງພຣະເຈົ້າຄັ້ງ ສຸດທ້າຍ. ແຕ່ພວກເຂົາໄດ້ຮັບການຊ່ວຍໃຫ້ພົ້ນແລ້ວ ເພາະໄດ້ “ຊຳລະເສື້ອລ່ານຂອງພວກເຂົາໃຫ້ ຂາວສະອາດ ດ້ວຍເລືອດຂອງພຣະເມສານ້ອຍ.” “ບໍ່ມີຄຳຕົວະອອກຈາກປາກຂອງພວກເຂົາ, ພວກເຂົາ ບໍ່ມີຕຳໜິເລີຍ” ຕໍ່ພຣະພັກພຣະເຈົ້າ. “ດັ່ງນັ້ນ, ພວກເຂົາຈຶ່ງໄດ້ຢືນຢູ່ຕໍ່ໜ້າພຣະຣາຊບັນລັງຂອງ ພຣະເຈົ້າ ແລະ ບົວລະບັດຮັບໃຊ້ພຣະອົງໃນພຣະວິຫານ ທັງກາງເວັນແລະກາງຄືນ ແລະພຣະອົງຜູ້ ທີ່ປະທັບຢູ່ເທິງພຣະຣາຊບັນລັງນັ້ນ ຈະຊົງສະຖິດຢູ່ນຳ ແລະ ປົກປ້ອງຄຸ້ມຄອງພວກເຂົາ.” ພວກເຂົາ ໄດ້ເຫັນຄວາມຈິບຫາຍຂອງແຜ່ນດິນໂລກ ຍ້ອນຄວາມອຶດຢາກ ແລະ ພະຍາດໂຣຄາລະບາດ, ທັງ ໄດ້ເຫັນດວງຕາເວັນມີພະລັງແຜດເຜົາມະນຸດດ້ວຍຄວາມຮ້ອນອັນຮ້າຍແຮງ. ພວກເຂົາເອງກໍໄດ້ທົນຕໍ່ ຄວາມທຸກທໍລະມານ, ຄວາມອຶດຫິວ ແລະ ຄວາມກະຫາຍນ້ຳ. ບັດນີ້, “ພວກເຂົາຈະບໍ່ອຶດເຂົ້າຢາກນ້ຳ ອີກຕໍ່ໄປຈັກເທື່ອ, ຕາເວັນ ຫຼື ແສງແດດອັນຮ້ອນກ້າ ຈະບໍ່ເຜົາໄໝ້ພວກເຂົາ, ເພາະພຣະເມສານ້ອຍທີ່ ປະທັບຢູ່ທ່າມກາງພຣະຣາຊບັນລັງນັ້ນ ຈະເປັນພຣະຜູ້ລ້ຽງຂອງພວກເຂົາ. ພຣະອົງຈະຊົງນຳພວກເຂົາ ໄປເຖິງບໍ່ນ້ຳພຸແຫ່ງຊີວິດ; ແລະພຣະເຈົ້າຈະຊົງເຊັດນ້ຳຕາທຸກຢົດຈາກຕາຂອງພວກເຂົາ.” (ພຣະນິມິດ 15:2, 3 TKJV; 14:1–5; 7:14–17).[2] *{GC 648.3}*

ໃນທຸກຍຸກທຸກສະໄໝ ຜູ້ທີ່ພຣະຜູ້ຊ່ວຍໃຫ້ລອດຊົງເລືອກໄວ້ ໄດ້ຮັບການຝຶກຝົນຜ່ານຄວາມ ລຳບາກ. ພວກເຂົາດຳເນີນຊີວິດໃນໂລກໄປໃນທາງທີ່ຄັບແຄບ ແລະ ໄດ້ຮັບການຊຳລະໃນເຕົາຫຼອມ ແຫ່ງຄວາມທຸກຍາກລຳບາກ. ພວກເຂົາໄດ້ອົດທົນຕໍ່ການຖືກຕໍ່ຕ້ານ, ຄວາມກຽດຊັງ ແລະ ການ ໃສ່ຮ້າຍປ້າຍສີເພາະເຫັນແກ່ພຣະເຢຊູ. ພວກເຂົາຕິດຕາມພຣະອົງທ່າມກາງຄວາມຂັດແຍ້ງອັນຮຸນແຮງ, ໄດ້ປະຕິເສດຕົນເອງ ແລະ ພົບກັບຄວາມຜິດຫວັງອັນຂົມຂື່ນ. ຈາກປະສົບການອັນເຈັບປວດຂອງ ຕົນເອງ, ພວກເຂົາຈຶ່ງໄດ້ຮຽນຮູ້ເຖິງຄວາມຮ້າຍກາດ ແລະ ພະລັງຂອງຄວາມບາບ ພ້ອມທັງສຳນຶກ ເຖິງຄວາມຜິດ ແລະ ຄວາມທຸກໂສກທີ່ເກີດຈາກຄວາມບາບ; ສະນັ້ນ, ພວກເຂົາຈຶ່ງກຽດຊັງຄວາມ ບາບຫຼາຍທີ່ສຸດ. ເມື່ອໄດ້ເຂົ້າໃຈເຖິງການເສຍສະຫຼະອັນບໍ່ມີຂອບເຂດເພື່ອປົ່ນປົວຄວາມບາບ, ພວກເຂົາ ກໍຖ່ອມຕົວລົງ ແລະ ສັນລະເສີນພຣະອົງ ດ້ວຍຈິດໃຈທີ່ເຕັມລົ້ນດ້ວຍຄວາມຮູ້ສຶກຂອບພຣະຄຸນ ເຊິ່ງ ຜູ້ທີ່ບໍ່ເຄີຍຫຼົງໃນຄວາມບາບບໍ່ສາມາດເຂົ້າໃຈໄດ້. ພວກເຂົາມີຄວາມຮັກຫຼາຍ ເພາະໄດ້ຮັບການອະໄພ ຫຼາຍ. ເມື່ອໄດ້ມີສ່ວນຮ່ວມໃນການທົນທຸກຂອງພຣະຄຣິສແລ້ວ ພວກເຂົາຈຶ່ງເໝາະສົມທີ່ຈະມີສ່ວນຮ່ວມ ໃນສະຫງ່າຣາສີຂອງພຣະອົງດ້ວຍ. *{GC 649.1}*

ທາຍາດຂອງພຣະເຈົ້າມາຈາກທີ່ຕ່ຳຕ້ອຍຂອງແຜ່ນດິນໂລກເຊັ່ນ: ຫ້ອງນ້ອຍໃຕ້ຫຼັງຄາເຮືອນ, ກະຕູບ, ຄຸກມືດ, ຫຼັກປະຫານ, ພູເຂົາ, ຖິ່ນແຫ້ງແລ້ງກັນດານ, ຖ້ຳໃນພູຜາ ແລະ ຖ້ຳໃນທະເລ. ເມື່ອຢູ່ໃນ ໂລກນີ້ ພວກເຂົາ “ລຳບາກຍາກຈົນ, ຖືກຂົ່ມເຫັງ ແລະ ທົນທຸກເວດທະນາຫຼາຍປະການ.” ຫຼາຍ ລ້ານຄົນໄດ້ຕາຍຢ່າງອັບອາຍ ເພາະປະຕິເສດການຫຼອກລວງ ແລະ ຄຳແອບອ້າງຂອງຊາຕານ. ສາມ ມະນຸດໄດ້ຕັດສິນວ່າ ພວກເຂົາເປັນອາດຊະຍາກອນທີ່ຊົ່ວຮ້າຍທີ່ສຸດ. ແຕ່ບັດນີ້, “ພຣະເຈົ້ານັ້ນແຫຼະ

[2] ຂໍ້ຄວາມໃນຫຍໍ້ໜ້ານີ້ໄດ້ໃຊ້ພຣະຄຳພີສະບັບ LO2012 ແລະ ສະບັບ LCV ສະຫຼັບກັນ.

ຊົງເປັນຜູ້ພິພາກສາ.” (ເພງສັນລະເສີນ 50:6 TKJV). ບັດນີ້, ຄຳຕັດສິນຕ່າງ ໆ ທີ່ເກີດຂຶ້ນໃນໂລກໄດ້ຖືກປິ້ນກັບ. “ພຣະອົງຈະ . . . ກຳຈັດຄວາມອັບອາຍ ທີ່ປະຊາຊົນຂອງພຣະອົງໄດ້ຮັບຢູ່ທົ່ວໂລກ.” (ເອຊາຢາ 25:8). “ຄົນຈະເອີ້ນຊື່ພວກເຂົາວ່າ, ‘ປະຊາຊົນບໍຣິສຸດ’ ‘ຜູ້ທີ່ພຣະເຈົ້າຢາເວໄດ້ຊົງໄຖ່ໄວ້ແລ້ວ.’” ພຣະອົງຈະປະທານ “ຄວາມສວຍງາມແທນຂີ້ເທົ່າໃຫ້ແກ່ພວກເຂົາ, ນ້ຳມັນແຫ່ງຄວາມຍິນດີແທນການໄວ້ທຸກ, ຜ້າຫົ່ມແຫ່ງການສັນລະເສີນແທນຈິດໃຈທີ່ທໍ້ຖອຍ.” (ເອຊາຢາ 62:12; 61:3 ດັດແປງຈາກສະບັບ TKJV). ພວກເຂົາຈະບໍ່ອ່ອນແອ, ທົນທຸກທໍລະມານ, ກະຈັດກະຈາຍ ຫຼື ຖືກຂົ່ມເຫັງອີກຕໍ່ໄປ. ນັບແຕ່ນີ້ເປັນຕົ້ນໄປ, ພວກເຂົາຈະໄດ້ຢູ່ກັບອົງພຣະຜູ້ເປັນເຈົ້າຕະຫຼອດໄປເປັນນິດ. ພວກເຂົາຢືນຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າ ນຸ່ງເຄື່ອງທີ່ງົດງາມຫຼາຍກວ່າເຄື່ອງນຸ່ງຂອງຜູ້ມີກຽດທີ່ສຸດໃນໂລກ. ພວກເຂົາສວມມົງກຸດທີ່ສະຫງ່າງາມຫຼາຍກວ່າມົງກຸດໃດ ໆ ຂອງບັນດາກະສັດໃນໂລກ. ວັນເວລາແຫ່ງຄວາມເຈັບປວດ ແລະ ການຮ້ອງໄຫ້ໄດ້ຜ່ານພົ້ນໄປຕະຫຼອດການ. ພຣະມະຫາກະສັດຊົງເຊັດນ້ຳຕາອອກຈາກໃບໜ້າຂອງທຸກຄົນ; ທຸກສິ່ງທີ່ເຮັດໃຫ້ເສົ້າໂສກໄດ້ຖືກກຳຈັດອອກໄປຢ່າງໝົດສິ້ນແລ້ວ. ໃນຂະນະທີ່ກຳລັງໂບກກ້ານຕານ, ພວກເຂົາຮ້ອງເພງສັນລະເສີນດ້ວຍສຽງສົດໃສອັນໄພເລາະ. ທຸກຊີວິດເຂົ້າຮ່ວມຮ້ອງເພງປະສານສຽງດັງກ້ອງທົ່ວສະຫວັນວ່າ: “ຄວາມລອດພົ້ນຂຶ້ນຢູ່ກັບພຣະເຈົ້າຂອງພວກເຮົາ ຜູ້ຊົງປະທັບຢູ່ເທິງພຣະທາຣບັນລັງ ແລະ ຂຶ້ນກັບພຣະເມສານ້ອຍ.” ແລ້ວຊາວສະຫວັນທັງປວງກໍຮ້ອງຕອບວ່າ: “ອາແມນ! ຄຳສັນລະເສີນ, ສະຫງ່າຣາສີ, ສະຕິປັນຍາ, ຄຳໂມທະນາຂອບພຣະຄຸນ, ກຽດຕິຍົດ, ຣິດອຳນາດ ແລະ ຣິດເດດ ຈົ່ງເປັນຂອງພຣະເຈົ້າຂອງພວກຂ້ານ້ອຍ ຕະຫຼອດຊົ່ວນິຣັນດອນເທີ້ນ ອາແມນ.” (ພຣະນິມິດ 7:10, 12). *{GC 650.1}*

ຈະສຶກສາແຜນການຊົງໄຖ່ຕະຫຼອດນິຣັນ

ໃນຊີວິດນີ້ ພວກເຮົາສາມາດເຂົ້າໃຈພຽງແຕ່ເບື້ອງຕົ້ນ ກ່ຽວກັບເລື່ອງອັນໜ້າອັດສະຈັນຂອງການໄຖ່ມະນຸດໃຫ້ລອດພົ້ນ. ພວກເຮົາມີຄວາມເຂົ້າໃຈທີ່ຈຳກັດ ຈຶ່ງບໍ່ອາດເຂົ້າໃຈຄວາມໝາຍຂອງສິ່ງທີ່ເຮົາໄຕ່ຕອງພິຈາລະນາຢ່າງເລິກເຊິ່ງໄດ້ ເຖິງແມ່ນວ່າຈະພະຍາຍາມສຸດຄວາມສາມາດກໍຕາມ. ໃຫ້ເຮົາໄຕ່ຕອງເຖິງສິ່ງທີ່ເຂົ້າມາພົບກັນທີ່ໄມ້ກາງແຂນ ຄືຄວາມອັບອາຍ ແລະ ສະຫງ່າຣາສີ, ຊີວິດ ແລະ ຄວາມຕາຍ, ຄວາມຍຸຕິທຳ ແລະ ຄວາມເມດຕາ. ຢ່າງໃດກໍຕາມ, ພວກເຮົາບໍ່ສາມາດເຂົ້າເຖິງຄວາມກວ້າງ ເລິກ ສູງ ຍາວ ແຫ່ງຄວາມຮັກໃນການໄຖ່ມະນຸດໃຫ້ລອດ. ໃນສະຫວັນແມ່ນແຕ່ຜູ້ທີ່ໄດ້ຮັບການໄຖ່ ກໍຈະບໍ່ເຂົ້າໃຈທັງໝົດ, ເຖິງແມ່ນວ່າພວກເຂົາຈະເຫັນແບບໜ້າຕໍ່ໜ້າ ແລະ ຈະຮູ້ຈັກເໝືອນດັ່ງພວກເຂົາເປັນທີ່ຮູ້ຈັກກໍຕາມ. ຕະຫຼອດຊົ່ວນິຣັນ, ພຣະເຈົ້າຈະຊົງເປີດເຜີຍໃຫ້ພວກເຂົາເຂົ້າໃຈຄວາມຈິງໃນລັກສະນະທີ່ໃໝ່ຢູ່ສະເໝີ ເຊິ່ງຈະເຮັດໃຫ້ພວກເຂົາປະຫຼາດໃຈ ແລະ ມີຄວາມຊົມຊື່ນຍິນດີ. ເຖິງແມ່ນວ່າຄວາມເສົ້າສະຫຼົດໃຈ, ຄວາມເຈັບປວດ ແລະ ການທົດລອງຂອງໂລກນີ້ຈະສິ້ນສຸດລົງ ແລະ ສາເຫດຂອງຄວາມທຸກເຫຼົ່ານັ້ນຖືກກຳຈັດອອກໄປແລ້ວ, ແຕ່ໄພ່ພົນຂອງພຣະເຈົ້າຈະຍັງມີຄວາມເຂົ້າໃຈອັນແຈ່ມແຈ້ງວ່າ ຄ່າໄຖ່ພວກເຂົາໃຫ້ລອດນັ້ນສູງພຽງໃດ. *{GC 651.1}*

ໄມ້ກາງແຂນຂອງພຣະຄຣິສ ຈະເປັນຫົວຂໍ້ສຳຄັນຂອງການສຶກສາຄົ້ນຄວ້າ ແລະ ບົດເພງສັນລະເສີນຂອງຜູ້ທີ່ໄດ້ຮັບການໄຖ່ຕະຫຼອດຊົ່ວນິຣັນ. ທຸກຄັ້ງທີ່ເຫັນສະຫງ່າຣາສີຂອງພຣະຄຣິສ ກໍຈະລະນຶກເຖິງການເສຍສະຫຼະຂອງພຣະອົງເທິງໄມ້ກາງແຂນ. ຈະບໍ່ມີຜູ້ໃດລືມເລີຍວ່າ ພຣະອົງຜູ້ຊົງສ້າງສິ່ງສາລະພັດດ້ວຍຣິດອຳນາດ ແລະ ຊົງຄ້ຳຈຸນບັນດາໂລກຕ່າງ ໆ ໃນຫ້ວງອາວະກາດອັນກວ້າງໄກດ້ວຍຣິດທານຸພາບຊົງຖ່ອມພຣະອົງລົງເພື່ອຍົກມະນຸດຂຶ້ນ. ຈະບໍ່ມີການລືມເລີຍວ່າອົງພຣະຜູ້ເປັນເຈົ້າແຫ່ງສະຫວັນຊົງຖ່ອມພຣະອົງລົງເພື່ອປະໂຫຍດຂອງມະນຸດທີ່ຫຼົງໃນຄວາມບາບ, ຈະບໍ່ມີວັນລືມວ່າພຣະອົງຜູ້ທີ່ເຫຼົ່າ

ເຄຣຸບ ແລະ ເສຣາຟິມອັນເຈີດຈ້າຍິນດີນະມັດສະການນັ້ນຊົງແບກຮັບຄວາມຜິດ ແລະ ຄວາມອັບອາຍ ຂອງຄວາມບາບ, ຊົງອົດທົນເມື່ອພຣະບິດາຊົງເຊື່ອງພຣະພັກຈາກພຣະອົງ ຈົນກະທັ້ງຄວາມທຸກຂອງ ໂລກນີ້ ໄດ້ເຮັດໃຫ້ຫົວໃຈຂອງພຣະອົງແຕກສະຫຼາຍ ແລະ ພຣະອົງສິ້ນພຣະຊົນທີ່ໄມ້ກາງແຂນແຫ່ງ ຄານວາຣີ. ທຸກຊີວິດໃນຈັກກະວານຈະຮູ້ສຶກປະຫຼາດໃຈ ແລະ ບູຊາຮັກພຣະອົງຢູ່ຕະຫຼອດໄປ ເມື່ອ ພວກເຂົາລະນຶກໄດ້ວ່າ ພຣະຜູ້ຊົງສ້າງບັນດາໂລກທັ້ງຫຼາຍ ຄືພຣະອົງຜູ້ມີສິດອຳນາດເໜືອຊະຕາກຳ ຂອງສິ່ງມີຊີວິດທັ້ງປວງ ຊົງຮັກມະນຸດຈົນຍອມວາງສະຫງ່າຣາສີຂອງພຣະອົງລົງ ແລະ ຖ່ອມພຣະອົງ ລົງເຖິງທີ່ສຸດ. ເມື່ອບັນດາຜູ້ລອດພົ້ນ ເຫັນພຣະພັກຂອງພຣະຜູ້ໄຖ່ສະຫວ່າງສະໄຫວດ້ວຍສະຫງ່າຣາສີ ຂອງພຣະບິດາ, ເມື່ອພວກເຂົາເຫັນບັນລັງທີ່ຢັ້ງຢືນຕະຫຼອດການ ແລະ ຮູ້ວ່າຣາຊອານາຈັກຂອງພຣະອົງ ບໍ່ມີວັນສິ້ນສຸດ, ພວກເຂົາກໍພາກັນຮ້ອງເພງສັນລະເສີນດ້ວຍຄວາມຊົມຊື່ນຍິນດີວ່າ: “ພຣະເມສານ້ອຍຜູ້ ຊົງຖືກຂ້ານັ້ນຊົງສົມຄວນ, ຊົງສົມຄວນ, ພຣະອົງຊົງໄຖ່ພວກເຮົາໃຫ້ກັບຄືນສູ່ພຣະເຈົ້າ ດ້ວຍພຣະໂລຫິດ ອັນລ້ຳຄ່າຂອງພຣະອົງເອງ!” *{GC 651.2}*

ຄວາມລີ້ລັບແຫ່ງໄມ້ກາງແຂນ ສາມາດອະທິບາຍຂໍ້ເລິກລັບອື່ນ ໆ ໄດ້ໝົດ. ເມື່ອກ່ອນພວກເຮົາ ເຄີຍຮູ້ສຶກຢ້ານກົວຕໍ່ພຣະລັກສະນະບາງຢ່າງຂອງພຣະເຈົ້າ, ແຕ່ການສິ້ນພຣະຊົນຂອງພຣະຄຣິສເທິງ ພູເຂົາຄານວາຣີໄດ້ເປີດເຜີຍໃຫ້ເຫັນວ່າ ພຣະລັກສະນະເຫຼົ່ານັ້ນທັງງົດງາມ ແລະ ໜ້າປະທັບໃຈ. ທີ່ ໄມ້ກາງແຂນເຮົາເຫັນຄວາມເມດຕາ, ຄວາມອ່ອນໂຍນ ແລະ ຄວາມຮັກແບບພໍ່ແມ່ປະສານກົມກຽວກັບ ຄວາມບໍຣິສຸດ, ຄວາມຍຸຕິທຳ ແລະ ຣິດອຳນາດ. ເມື່ອພວກເຮົາພິຈາລະນາສະຫງ່າຣາສີແຫ່ງບັນລັງອັນ ສູງສົ່ງຂອງພຣະອົງ, ພວກເຮົາກໍເຫັນພຣະຄຸນຂອງພຣະອົງຢ່າງທີ່ບໍ່ເຄີຍເຂົ້າໃຈມາກ່ອນ ແລະ ຊາບຊຶ້ງ ໃນພຣະນາມອັນເປັນທີ່ຮັກວ່າ “ພຣະບິດາຂອງພວກເຮົາ” ຢ່າງເລິກເຊິ່ງກວ່າແຕ່ກ່ອນ. *{GC 652.1}*

ທຸກຄົນຈະເຫັນວ່າ ພຣະອົງຜູ້ຊົງມີພຣະປັນຍາອັນບໍ່ມີຂອບເຂດຈຳກັດ ບໍ່ສາມາດວາງແຜນການ ຊ່ວຍພວກເຮົາໃຫ້ລອດໄດ້ ນອກຈາກການຖວາຍພຣະບຸດຂອງພຣະອົງເປັນເຄື່ອງບູຊາ. ຜົນຂອງການ ຖວາຍບູຊານີ້ ແມ່ນຄວາມຊົມຊື່ນຍິນດີທີ່ຈະເຫັນໂລກນີ້ເຕັມໄປດ້ວຍຜູ້ທີ່ໄດ້ຮັບການຊົງໄຖ່ ຢູ່ໃນ ສະພາບທີ່ບໍຣິສຸດ, ມີຄວາມສຸກ ແລະ ບໍ່ຮູ້ຈັກຕາຍ. ຜົນຈາກການທີ່ພຣະຜູ້ຊ່ວຍໃຫ້ລອດໄດ້ຕໍ່ສູ້ ກັບອຳນາດແຫ່ງຄວາມມືດນັ້ນ ໄດ້ນຳຄວາມສຸກມາສູ່ຜູ້ທີ່ໄດ້ຮັບການໄຖ່ ແລະ ນຳສະຫງ່າຣາສີ ມາສູ່ພຣະເຈົ້າຕະຫຼອດໄປເປັນນິດ. ຄຸນຄ່າຂອງຈິດວິນຍານນັ້ນປະເສີດເຫຼືອລົ້ນ ຈົນພຣະບິດາພໍ ພຣະໄທໃນຄ່າໄຖ່; ແລະເມື່ອພຣະຄຣິສເຫັນຜົນແຫ່ງການເສຍສະຫຼະຄັ້ງຍິ່ງໃຫຍ່ນັ້ນ ກໍພໍພຣະໄທເຊັ່ນ ກັນ. *{GC 652.2}*

41

ແຜ່ນດິນໂລກຮ້າງເປົ່າ

ຊົງລົງໂທດບາບີໂລນ

“ການບາບຂອງນະຄອນນັ້ນ ກອງສູງຂຶ້ນພຽງຟ້າແລ້ວ ແລະ ພຣະເຈົ້າໄດ້ຊົງຈື່ຈຳການກະທຳອັນຊົ່ວຊ້າຂອງມັນໄວ້ແລ້ວ. ນະຄອນນັ້ນໄດ້ໃຫ້ຜົນຢ່າງໃດ ກໍຈົ່ງໃຫ້ຜົນແກ່ມັນຢ່າງນັ້ນ. . . . ໃນຈອກທີ່ມັນໄດ້ປະສົມໄວ້ ກໍຈົ່ງປະສົມລົງໃນຈອກນັ້ນສອງເທົ່າ. ນະຄອນນັ້ນໄດ້ອວດຈອງຫອງ ແລະ ປ່ອຍຕົວໄປຕາມຄວາມສະໜຸກສະໜານເທົ່າໃດ ກໍຈົ່ງໃຫ້ມັນໄດ້ຮັບການທໍລະມານ ແລະ ຄວາມໂສກເສົ້າຫຼາຍເທົ່ານັ້ນ ເພາະມັນຄິດໃນໃຈວ່າ, ‘ເຮົາຢູ່ໃນຕຳແໜ່ງຣາຊິນີ ບໍ່ແມ່ນແມ່ໝ້າຍ, ເຮົາຈະບໍ່ປະສົບຄວາມໂສກເສົ້າຈັກເທື່ອ.’ ຍ້ອນການນີ້ ໄພພິບັດຕ່າງ ໆ ຂອງນະຄອນນັ້ນ ຈະຕົກຖືກບາງໃນວັນດຽວ ຄື ຄວາມຕາຍ, ຄວາມໂສກເສົ້າ ແລະ ຄວາມອຶດຢາກ. ແລະໄຟເຜົາຜານນາງໃຫ້ຈິບຫາຍ ເພາະອົງພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ຊົງຕັດສິນລົງໂທດນະຄອນນັ້ນ ຊົງປະກອບດ້ວຍພຣະກຳລັງ. ບັນດາກະສັດແຫ່ງແຜ່ນດິນໂລກ ທີ່ໄດ້ລ່ວງຜິດສິນທຳທາງເພດກັບນະຄອນນັ້ນ ແລະ ໄດ້ປ່ອຍຕົວໄປຕາມຄວາມສະໜຸກສະໜານຮ່ວມກັນນັ້ນ ເມື່ອໄດ້ເຫັນຄວັນໄຟໄໝ້ ມັນກໍຈະຕີເອິກຮ້ອງໄຫ້. ກະສັດເຫຼົ່ານັ້ນ . . . ຈະກ່າວວ່າ, ‘ວິບັດ ວິບັດແລ້ວ ບາບີໂລນມະຫານະຄອນທີ່ແຂງແຮງເອີຍ ເຈົ້າໄດ້ຖືກການພິພາກສາລົງໂທດເສຍ ພາຍໃນຊົ່ວໂມງດຽວເທົ່ານັ້ນ.’” (ພຣະນິມິດ 18:5–10).[1] *{GC 653.1}*

“ບັນດາພໍ່ຄ້າແຫ່ງແຜ່ນດິນໂລກ” ທີ່ “ລ້ຳລວຍດ້ວຍຊັບອັນຟຸມເຟືອຍຂອງນະຄອນນັ້ນ” ຕ່າງ ກໍ “ຢືນຢູ່ຫ່າງ ໆ ເພາະຢ້ານໄດ້ຮັບສ່ວນທົນທຸກທໍລະມານກັບນາງ. ພວກເຂົາຈະຮ້ອງໄຫ້ ແລະ ໂສກເສົ້າ ແລະ ເປັ່ງສຽງດັງວ່າ, ‘ວິບັດ ວິບັດແລ້ວ ມະຫານະຄອນນັ້ນ ທີ່ເຄີຍນຸ່ງຫົ່ມຜ້າປ່ານເນື້ອລະອຽດ ຜ້າສີມ່ວງອ່ອນ ຜ້າສີແດງເຂັ້ມ ທີ່ເຄີຍປະດັບຕົວດ້ວຍຄຳ ດ້ວຍເພັດພອຍຕ່າງ ໆ ແລະ ດ້ວຍໄຂ່ມຸກນັ້ນ. ພຽງແຕ່ຊົ່ວໂມງດຽວ ຊັບສົມບັດເຫຼົ່ານັ້ນກໍໄດ້ຖືກທຳລາຍເສຍໄປໝົດ.’” (ພຣະນິມິດ 18:11, 3, 15–17). *{GC 653.2}*

ນີ້ຄືການພິພາກສາລົງໂທດທີ່ຈະຕົກໃສ່ບາບີໂລນໃນມື້ແຫ່ງພຣະພິໂຣດຂອງພຣະເຈົ້າ. ນະຄອນ ບາບີໂລນ ໄດ້ ສະສົມ ຄວາມ ຊົ່ວຊ້າ ຈົນ ເຕັມ ຂີດ, ບັດນີ້ ເຖິງ ເວລາ ແລ້ວ ທີ່ ນະຄອນ ນັ້ນ ຈະ ຖືກ ທຳລາຍ. *{GC 653.3}*

[1] ຫຼັງຈາກທີ່ບັນລະຍາຍເຖິງການຂຶ້ນສະຫວັນຂອງຜູ້ທີ່ໄດ້ຮັບຄວາມລອດພົ້ນ, ຜູ້ຂຽນຍ້ອນກັບຄືນໄປກ່າວເຖິງການສະເດັດກັບມາຂອງພຣະເຢຊູ ແລະ ເຫດການຕ່າງ ໆ ຫຼັງຈາກນັ້ນ ໃນມຸມມອງຂອງຄົນທີ່ພິນາດ ແລະ ພວກຜີມານຊາຕານ.

ຄົນອະທຳເສຍໃຈແຕ່ບໍ່ສຳນຶກ

ເມື່ອພຣະສຸຣະສຽງຂອງພຣະເຈົ້າປົດປ່ອຍໄພ່ພົນຂອງພຣະອົງ, ຜູ້ທີ່ສູນເສຍທຸກສິ່ງໃນການຕໍ່ສູ້ອັນຍິ່ງໃຫຍ່ຂອງຊີວິດ ຕື່ນຕົວຢ່າງໜ້າໃຈຫາຍ. ຕະຫຼອດໄລຍະເວລາແຫ່ງພຣະກະລຸນານັ້ນ ພວກເຂົາຫຼົງການຫຼອກລວງຂອງຊາຕານຈົນຕາບອດ ແລະ ຮູ້ສຶກວ່າມີຂໍ້ແກ້ຕົວໃນການເຮັດບາບ. ຄົນຮັ່ງມີເຄີຍທະນົງໃຈທີ່ມີຖານະສູງກວ່າຄົນດ້ອຍໂອກາດ, ເຖິງແມ່ນວ່າ ພວກເຂົາໄດ້ຊັບສິນມາໂດຍການລະເມີດພຣະບັນຍັດຂອງພຣະເຈົ້າກໍຕາມ. ພວກເຂົາບໍ່ໄດ້ເອົາໃຈໃສ່ຄົນອຶດຫິວ, ບໍ່ໄດ້ຫາເຄື່ອງນຸ່ງໃຫ້ຄົນເປືອຍກາຍ, ບໍ່ໄດ້ປະພຶດຢ່າງຍຸຕິທຳ ແລະ ບໍ່ມີໃຈເມດຕາ. ພວກເຂົາຊອກຫາການຍົກຍ້ອງເຊີດຊູ ແລະ ຄວາມນັບໜ້າຖືຕາຈາກເພື່ອນມະນຸດ. ບັດນີ້, ທຸກສິ່ງທີ່ເຮັດໃຫ້ພວກເຂົາຍິ່ງໃຫຍ່ໄດ້ຖືກຖອດຖອນໄປ ຈົນເຫຼືອແຕ່ຄວາມຫວ່າງເປົ່າ ແລະ ບໍ່ມີສິ່ງໃດປົກປ້ອງພວກເຂົາແລ້ວ. ຄົນຮັ່ງມີເຫຼົ່ານີ້ເກີດຄວາມສະທ້ານຢ້ານກົວໃນຂະນະທີ່ເບິ່ງການທຳລາຍຮູບເຄົາລົບທີ່ພວກເຂົາເລືອກແທນພຣະຜູ້ສ້າງ. ພວກເຂົາຍອມສະຫຼະຄວາມລອດ ເພື່ອແລກກັບຄວາມຮັ່ງມີ ແລະ ຄວາມມ່ວນຊື່ນທາງໂລກ ແຕ່ກັບບໍ່ໄດ້ສະແຫວງຫາຄວາມຮັ່ງມີຝ່າຍຈິດວິນຍານ. ຜົນທີ່ຕາມມາແມ່ນຊີວິດຂອງພວກເຂົາລົ້ມເຫຼວ; ຄວາມສຸກຈຶ່ງກັບກາຍເປັນຄວາມຂົມຂື່ນ, ຊັບສົມບັດໄດ້ກາຍເປັນກອງຂີ້ເຫຍື້ອ. ສິ່ງທີ່ຫາມາໄດ້ຕະຫຼອດຊີວິດຖືກກວາດລ້າງໄປພາຍໃນພັບຕາດຽວ. ຄົນຮັ່ງມີຄ່ຳຄວນເຖິງເຮືອນຊານຫຼັງໃຫຍ່ທີ່ຖືກທຳລາຍ ແລະ ເງິນຄຳທີ່ຖືກກວາດໄປ. ແຕ່ສຽງຄ່ຳຄວນຂອງພວກເຂົາກໍມິດງຽບລົງຍ້ອນຄວາມຢ້ານກົວວ່າ ຕົວເອງຈະຕ້ອງພິນາດໄປພ້ອມກັບຮູບເຄົາລົບຂອງຕົນ. {GC 654.1}

ຄົນອະທຳບໍ່ໄດ້ຮູ້ສຶກເສຍໃຈຍ້ອນຄວາມບາບໃນການເມີນເສີຍຕໍ່ພຣະເຈົ້າ ແລະ ເພື່ອນມະນຸດ ແຕ່ຍ້ອນພຣະເຈົ້າເປັນຝ່າຍຊະນະ. ພວກເຂົາຄ່ຳຄວນຍ້ອນຜົນທີ່ເກີດຂຶ້ນ ແຕ່ບໍ່ໄດ້ກັບໃຈຈາກຄວາມຊົ່ວຮ້າຍຂອງຕົນ. ຖ້າເຮັດໄດ້ພວກເຂົາກໍຈະໃຊ້ທຸກວິທີເພື່ອເອົາຊະນະ. {GC 654.2}

ຊາວໂລກເຫັນກຸ່ມຄົນທີ່ພວກເຂົາເຄີຍດູໝິ່ນເຍາะເຍີ້ຍ ແລະ ຢາກທຳລາຍໃຫ້ໝົດສິ້ນນັ້ນກັບຜ່ານເຫດການໂຣກລະບາດ, ລົມພະຍຸ ແລະ ແຜ່ນດິນໄຫວໂດຍບໍ່ໄດ້ຮັບອັນຕະລາຍ. ພຣະເຈົ້າຊົງເປັນໄຟທີ່ເຜົາຜານສຳລັບຜູ້ລະເມີດພຣະບັນຍັດຂອງພຣະອົງ ແຕ່ຊົງເປັນທີ່ລີ້ໄພອັນປອດໄພສຳລັບໄພ່ພົນຂອງພຣະອົງ. {GC 654.3}

ພວກສາສະໜາຈານອະທຳ

ສາສະໜາຈານທີ່ຍອມສະຫຼະຄວາມຈິງເພື່ອເອົາໃຈມະນຸດນັ້ນ ບັດນີ້ເຫັນແຈ້ງເຖິງລັກສະນະ ແລະ ອິດທິພົນແຫ່ງຄຳສອນຂອງຕົນ. ພວກເຂົາເຫັນຢ່າງຈະແຈ້ງວ່າ ພຣະເຈົ້າຊົງເຝົ້າເບິ່ງພວກເຂົາໃນຂະນະທີ່ຢືນເທດສະໜາ, ເມື່ອຢ່າງຕາມຖະໜົນຫົນທາງ ແລະ ເມື່ອຄົບຄ້າສະມາຄົມກັບຄົນໃນວາລະຕ່າງ ໆ ຂອງຊີວິດ. ອາລົມຄວາມຮູ້ສຶກທຸກຢ່າງ, ການຂຽນທຸກບັນທັດ, ຄຳເວົ້າທຸກຄຳ ແລະ ການກະທຳທຸກຢ່າງທີ່ນຳພາຄົນໃຫ້ຫຼົງໄປເພິ່ງໃນສິ່ງທີ່ບໍ່ຈິງ, ທັງໝົດນີ້ເປັນການຫວ່ານເມັດພືດລົງດິນ; ບັດນີ້, ພວກເຂົາຈະໄດ້ເຫັນການເກັບກ່ຽວ ຄືຄົນທັງຫຼາຍທີ່ຕ້ອງຈິບຫາຍຢູ່ອ້ອມຮອບພວກເຂົາ. {GC 654.4}

ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: “ພວກເຂົາບໍ່ສົນໃຈຮັກສາບາດແຜປະຊາຊົນຂອງເຮົາເລີຍ. ພວກເຂົາເວົ້າວ່າ, ‘ສະຫງົບສຸກ, ສະຫງົບສຸກ’ ໃນເມື່ອທຸກສິ່ງບໍ່ມີຄວາມສະຫງົບສຸກດັ່ງທີ່ໄດ້ເວົ້ານັ້ນ.” “ດ້ວຍການຕົວະຂອງພວກເຈົ້ານັ້ນ ພວກເຈົ້າເຮັດໃຫ້ຄົນຊອບທຳໝົດກຳລັງໃຈ ຄືຄົນທີ່ເຮົາບໍ່ຕ້ອງການທຳຮ້າຍ. ພວກເຈົ້າປ້ອງກັນຄົນຊົ່ວໄວ້ ບໍ່ໃຫ້ພວກເຂົາປະຖິ້ມຄວາມຊົ່ວ ແລະ ຊ່ວຍເອົາຊີວິດຂອງພວກເຂົາໄວ້.” (ເຢເຣມີຢາ 8:11; ເອເຊກຽນ 13:22). {GC 655.1}

“ວິບັດແກ່ພວກຜູ້ລ້ຽງແກະຜູ້ທີ່ທຳລາຍ ແລະ ເຮັດໃຫ້ກະຈັດກະຈາຍໄປທົ່ວທົ່ງຫຍ້າຂອງເຮົາ. . . . ເຮົາ ຈະລົງໂທດພວກເຈົ້າສຳລັບການຊົ່ວຊ້າທີ່ພວກເຈົ້າໄດ້ເຮັດນັ້ນ.” “ບັນດາພວກຜູ້ລ້ຽງແກະເອີຍ ຈົ່ງຮ້ອງໄຫ້ ສາ, ພວກເຈົ້າທີ່ເປັນຜູ້ລ້ຽງແກະຂອງເຮົາເອີຍ ຈົ່ງຮ້ອງໄຫ້ຄ່ຳຄວນສາ, ຈົ່ງໄວ້ທຸກ ແລະ ກິ້ງເກືອກຢູ່ໃນ ຂີ້ຝຸ່ນດິນ. ເວລາກຳມາເຖິງແລ້ວ ທີ່ພວກເຈົ້າຕ້ອງຖືກປະຫານໝູ່ . . . ພວກເຈົ້າບໍ່ມີທາງທີ່ຈະປົບໜີໄປໄດ້ ເລີຍ.” (ເຢເຣມີຢາ 23:1–2; 25:34–35). *{GC 655.2}*

ພວກສາສະໜາຈານ ແລະ ສະມາຊິກເຫັນແລ້ວວ່າ ພວກເຂົາບໍ່ໄດ້ຮັກສາຄວາມສຳພັນທີ່ຖືກຕ້ອງ ກັບພຣະເຈົ້າ ແຕ່ໄດ້ກະບົດຕໍ່ພຣະອົງຜູ້ຊົງເປັນແຫຼ່ງກຳເນີດຂອງກົດໝາຍອັນຍຸຕິທຳ ແລະ ຊອບທຳ ທັງປວງ. ການປະຖິ້ມພຣະບັນຍັດຂອງພຣະເຈົ້າໄດ້ກໍ່ໃຫ້ເກີດບັນຫາຊົ່ວຮ້າຍນາໆ ປະການ, ບໍ່ວ່າຈະ ເປັນການແຕກແຍກ, ຄວາມກຽດຊັງ ແລະ ຄວາມຊົ່ວຊ້າ ຈົນໂລກກາຍເປັນສະໜາມຮົບອັນກວ້າງ ໃຫຍ່ ແລະ ກາຍເປັນໜອງບຶງແຫ່ງຄວາມເສື່ອມຊາມ. ນີ້ແມ່ນສິ່ງທີ່ປາກົດແກ່ສາຍຕາຂອງຜູ້ທີ່ ປະຕິເສດຄວາມຈິງ ແລະ ເລືອກທີ່ຈະກອດກຳຄວາມຜິດເອົາໄວ້. ບໍ່ມີພາສາໃດທີ່ສາມາດອະທິບາຍ ເຖິງຄວາມໃຈຫາຍ ແລະ ຄວາມປາຖະໜາຂອງຜູ້ທີ່ບໍ່ເຊື່ອຟັງ ແລະ ບໍ່ສັດຊື່ ເມື່ອພວກເຂົາຮູ້ ວ່າໄດ້ສູນເສຍຊີວິດນິຣັນໄປຕະຫຼອດການ. ເຖິງຄາວນັ້ນ, ຄົນທີ່ຊາວໂລກເຄີຍຫຼົງໄຫຼຍ້ອນຄວາມ ສາມາດ ແລະ ການເວົ້າຈາຄ່ອງແຄ້ວລ່ຽນໄຫຼ ກໍຈະເຂົ້າໃຈວ່າຄຳຍ້ອງຍໍຂອງມະນຸດບໍ່ມີຄ່າຫຍັງ ເລີຍ. ພວກເຂົາຮູ້ເຖິງສິ່ງທີ່ຕົນໄດ້ສູນເສຍໄປຍ້ອນການລະເມີດ, ຈຶ່ງຂາບລົງທີ່ຕີນຂອງຜູ້ທີ່ພວກເຂົາເຄີຍ ໝິ່ນປະໝາດ ແລະ ເຍາะເຍີ້ຍຍ້ອນຄວາມສັດຊື່ຕໍ່ພຣະເຈົ້າ ພ້ອມທັງຍອມຮັບວ່າພຣະອົງຊົງຮັກຜູ້ທີ່ ສັດຊື່ເຫຼົ່ານັ້ນ. *{GC 655.3}*

ຄົນທັງຫຼາຍເຫັນແລ້ວວ່າ ພວກເຂົາຖືກຫຼອກລວງ. ພວກເຂົາກ່າວໂທດເຊິ່ງກັນແລະກັນວ່າເປັນ ຜູ້ນຳພາໄປສູ່ຄວາມຈິບຫາຍ, ແຕ່ທຸກຄົນພ້ອມໃຈກັນປະນາມພວກສາສະໜາຈານຢ່າງຮຸນແຮງທີ່ສຸດ. ພວກສາສະໜາຈານໄດ້ກ່າວແຕ່ເລື່ອງທີ່ຟັງແລ້ວສະບາຍຫູ; ພວກເຂົາໄດ້ນຳຜູ້ຟັງໃຫ້ລະເມີດພຣະບັນຍັດ ຂອງພຣະເຈົ້າ ແລະ ຂົ່ມເຫັງຜູ້ທີ່ຮັກສາພຣະບັນຍັດໄວ້ໃຫ້ບໍຣິສຸດ. ບັດນີ້, ພວກອາຈານເຫຼົ່ານີ້ ສາລະພາບຕໍ່ໜ້າຊາວໂລກດ້ວຍຄວາມສິ້ນຫວັງ ເຖິງການຫຼອກລວງຂອງພວກເຂົາ. ຝູງຊົນຮ້ອງ ອອກມາດ້ວຍຄວາມຄຽດແຄ້ນວ່າ: “ພວກເຮົາຈິບຫາຍແລ້ວ! ແລະພວກເຈົ້າເປັນຕົ້ນເຫດຂອງຄວາມ ຈິບຫາຍຂອງພວກເຮົາ;” ຈາກນັ້ນກໍຫັນມາຕໍ່ສູ້ຜູ້ລ້ຽງແກະປອມ. ຄົນທີ່ເຄີຍນັບຖືອາຈານເຫຼົ່ານັ້ນ ຫຼາຍທີ່ສຸດ ຈະເປັນພວກທີ່ກ່າວຄຳສາບແຊ່ງອັນຮຸນແຮງທີ່ສຸດໃສ່ພວກເຂົາ. ມືທີ່ເຄີຍສວມພວງມາໄລ ໃຫ້ພວກສາສະໜາຈານປອມ ບັດນີ້ກໍຍົກຂຶ້ນມາເພື່ອທຳລາຍພວກເຂົາ. ດາບທີ່ກຽມໄວ້ເພື່ອຂ້າຄົນຂອງ ພຣະເຈົ້າ ກັບຖືກນຳມາເພື່ອທຳລາຍສັດຕູຂອງພວກເຂົາ. ມີການຕໍ່ສູ້ ແລະ ການນອງເລືອດທຸກຫົນ ທຸກແຫ່ງ. *{GC 655.4}*

ຄົນອະທຳຖືກທຳລາຍ

“ສຽງຄຶກຄະນອງຈະດັງກ້ອງໄປຈົນເຖິງສຸດປາຍແຜ່ນດິນໂລກ. ເພາะພຣະເຈົ້າຢາເວຈະດຳເນີນ ຄະດີກັບປະຊາຊາດທັງຫຼາຍ; ພຣະອົງຈະນຳການພິພາກສາມາສູ່ມວນມະນຸດທັງໝົດ ແລະ ຈະ ປະຫານຄົນຊົ່ວຮ້າຍດ້ວຍດາບ.” (ເຢເຣມີຢາ 25:31 LCV). ການຂັດແຍ້ງອັນຍິ່ງໃຫຍ່ໄດ້ດຳເນີນ ມາເປັນເວລາຫົກພັນປີແລ້ວ. ພຣະບຸດຂອງພຣະເຈົ້າ ແລະ ເຫຼົ່າທູດສະຫວັນໄດ້ຕໍ່ສູ້ກັບອຳນາດ ຂອງມານຮ້າຍ ເພື່ອຕັກເຕືອນ, ໃຫ້ຄວາມສະຫວ່າງ ແລະ ຊ່ວຍມະນຸດໃຫ້ລອດພົ້ນ. ບັດນີ້, ທຸກ ຄົນໄດ້ເລືອກຝ່າຍຂອງຕົນແລ້ວ ຄົນອະທຳໄດ້ເຂົ້າຮ່ວມກັບຊາຕານຢ່າງເຕັມທີ່ ໃນການເຮັດສົງຄາມ ຕໍ່ສູ້ກັບພຣະເຈົ້າ. ເວລາໄດ້ມາເຖິງແລ້ວ ທີ່ພຣະເຈົ້າຈະປົກປ້ອງສິດອຳນາດຂອງພຣະບັນຍັດຂອງ

ພຣະອົງທີ່ຖືກຢຽບຢໍ້າ. ບັດນີ້, ການຂັດແຍ້ງບໍ່ແມ່ນກັບຊາຕານພຽງຜູ້ດຽວອີກຕໍ່ໄປ ແຕ່ແມ່ນກັບມະນຸດດ້ວຍ. “ອົງພຣະຜູ້ເປັນເຈົ້າມີຄະດີຕໍ່ສູ້ນາໆປະເທດ. ພຣະອົງຈະນຳຄົນຊົ່ວ . . . ໃຫ້ຖືກສັງຫານໝົດ.” (ເຢເຣມີຢາ 25:31 LO2012). *{GC 656.1}*

ເຄື່ອງໝາຍແຫ່ງການຊົ່ງໄຖ່ໄດ້ຖືກປະທັບໄວ້ເທິງຜູ້ທີ່ “ໂສກເສົ້າ ແລະ ຄ່ຳຄວນເພາະສິ່ງທີ່ໜ້າກຽດຊັງທັງໝົດ ເຊິ່ງຄົນທັງຫຼາຍໄດ້ເຮັດ[ຂຶ້ນ].” ບັດນີ້, ທູດມໍຣະນະກໍອອກໄປ, ເຊິ່ງກົງກັບກຸ່ມຜູ້ຊາຍຖືອາວຸດໃນນິມິດຂອງເອເຊກຽນ. ພວກເຂົາໄດ້ຮັບຄຳສັ່ງວ່າ: “ຈົ່ງຂ້າທັງຜູ້ເຖົ້າ, ຄົນໜຸ່ມ ແລະ ແມ່ຍິງ, ແມ່ ແລະ ເດັກນ້ອຍ, ແຕ່ຢ່າແຕະຕ້ອງຜູ້ທີ່ມີເຄື່ອງໝາຍນັ້ນ. ຈົ່ງເລີ່ມຕົ້ນຕັ້ງແຕ່ສະຖານນະມັດສະການຂອງເຮົານີ້.” ຜູ້ເຜີຍພຣະທຳກ່າວວ່າ: “ດັ່ງນັ້ນ ຄົນເຫຼົ່ານັ້ນຈຶ່ງເລີ່ມຕົ້ນຂ້າຕັ້ງແຕ່ຜູ້ເຖົ້າທີ່ຢູ່ຕໍ່ໜ້າວິຫານ.” (ເອເຊກຽນ 9:1–6 LCV). ການທຳລາຍເລີ່ມຕົ້ນຈາກພວກທີ່ອ້າງຕົວເປັນຜູ້ພິທັກຮັກສາຝ່າຍຈິດວິນຍານຂອງປະຊາຊົນ. ພວກຜູ້ເຝົ້າຍາມປອມເປັນກຸ່ມທຳອິດທີ່ລົ້ມລົງ. ບໍ່ມີຜູ້ໃດທີ່ຈະສົງສານ, ບໍ່ມີໃຜຈະໄວ້ຊີວິດພວກເຂົາ. ທັງຜູ້ຊາຍ, ແມ່ຍິງ, ຍິງສາວ ແລະ ເດັກນ້ອຍກໍພິນາດໄປພ້ອມກັນ. *{GC 656.2}*

“ພຣະເຢໂຮວາກຳລັງສະເດັດອອກມາຈາກສະຖານທີ່ຂອງພຣະອົງ ເພື່ອລົງໂທດຊາວແຜ່ນດິນໂລກເພາະຄວາມຊົ່ວຊ້າຂອງເຂົາທັງຫຼາຍ; ແລະແຜ່ນດິນໂລກຈະເປີດເຜີຍໂລຫິດເຊິ່ງຫຼັ່ງຢູ່ເທິງມັນ ແລະ ຈະບໍ່ປິດບັງຜູ້ຖືກຂ້າຂອງມັນໄວ້ອີກ.” (ເອຊາຢາ 26:21 ດັດແປງຈາກສະບັບ TKJV). “ອົງພຣະຜູ້ເປັນເຈົ້າຈະນຳໂຣກລະບາດມາສູ່ຊົນຊາດທັງໝົດ ເຊິ່ງໄດ້ເຮັດເສິກຕໍ່ສູ້ນະຄອນເຢຣູຊາເລັມ. ເນື້ອໜັງຂອງພວກເຂົາຈະເປື່ອຍເນົ່າ ເມື່ອຍັງມີຊີວິດຢູ່; ຕາ ແລະ ລີ້ນຂອງພວກເຂົາຈະເປື່ອຍເນົ່າເຊັ່ນກັນດ້ວຍ. ໃນວັນນັ້ນ, ອົງພຣະຜູ້ເປັນເຈົ້າຈະເຮັດໃຫ້ພວກເຂົາສັບສົນວຸ້ນວາຍໃຫຍ່ ແລະ ຢ້ານກົວ ຈົນວ່າຈະໂຈມຕີ ແລະ ຈັບກຸມຄົນທີ່ຢູ່ໃກ້ຄຽງຕົນ.” (ເຊກາຣີຢາ 14:12–13 LO2012). ຄົນອະທຳທັງປວງຈະພິນາດໄປດ້ວຍການຕໍ່ສູ້ອັນບ້າຄັ່ງທີ່ເກີດຈາກອາລົມຮຸນແຮງຂອງພວກເຂົາເອງ ແລະ ຈາກການຖອກເທພຣະພິໂຣດອັນເຕັມຂະໜາດຂອງພຣະເຈົ້າ. ບໍ່ມີໃຜຈະລອດພົ້ນ, ບໍ່ວ່າຈະເປັນບາດຫຼວງ, ຜູ້ປົກຄອງ, ປະຊາຊົນ, ຄົນຮັ່ງມີ, ຄົນທຸກຍາກ, ຄົນຊັ້ນສູງ ຫຼື ຄົນຊັ້ນຕ່ຳ. “ໃນວັນນັ້ນ ຊາກສົບທັງຫຼາຍຂອງຄົນທີ່ພຣະເຈົ້າຢາເວໄດ້ຂ້າຖິ້ມ ຈະກະຈັດກະຈາຍກັນຢູ່ ແຕ່ສົ້ນໜຶ່ງຫາອີກສົ້ນໜຶ່ງຂອງແຜ່ນດິນໂລກ. ຈະບໍ່ມີຜູ້ໃດເລີຍໄວ້ທຸກໃຫ້ພວກເຂົາ ແລະທັງຈະບໍ່ມີຜູ້ໃດເອົາຊາກສົບໄປຝັງໄວ້.” (ເຢເຣມີຢາ 25:33). *{GC 656.3}*

ເມື່ອພຣະຄຣິສສະເດັດມາ, ຄົນອະທຳຈະຖືກລຶບລ້າງໄປຈາກພື້ນແຜ່ນດິນໂລກ. ພວກເຂົາຈະຖືກເຜົາຜານດ້ວຍລົມພຣະໂອດຂອງພຣະອົງ ແລະ ຖືກທຳລາຍດ້ວຍສະຫງ່າຣາສີອັນເຈີດຈ້າຂອງພຣະອົງ. ພຣະຄຣິສຈະນຳໄພ່ພົນຂອງພຣະອົງໄປຍັງນະຄອນຂອງພຣະເຈົ້າ, ເຮັດໃຫ້ແຜ່ນດິນໂລກຫວ່າງເປົ່າບໍ່ມີຜູ້ອາໄສຢູ່. “ດັ່ງນັ້ນ, ພຣະເຢໂຮວາໃຫ້ແຜ່ນດິນຮ້າງເປົ່າ ແລະ ຂວ້ຳໜ້າດິນ ແລະ ໃຫ້ປະຊາຊົນພັດພາກຈາກກັນ.” “ໂລກຈະຫວ່າງເປົ່າ ແລະ ຍັບເຍີນຢ່າງສິ້ນເຊີງ. ອົງພຣະຜູ້ເປັນເຈົ້າຊົງກ່າວຖ້ອຍຄຳເຫຼົ່ານີ້.” “ໂລກເປັນມົນທິນ ເນື່ອງຈາກຜູ້ອາໄສຂອງມັນ, ເພາະເຂົາທັງຫຼາຍລະເມີດທຳມະບັນຍັດ, ຝ່າຝືນກົດເກນ ແລະ ທຳລາຍພັນທະສັນຍານິຣັນດອນ. ເພາະສະນັ້ນ, ຄຳສາບແຊ່ງກືນກິນໂລກ ແລະ ຜູ້ອາໄສໃນນັ້ນກໍແບກຮັບຄວາມຜິດ; ເພາະສະນັ້ນ, ຜູ້ອາໄສຂອງໂລກຈຶ່ງຖືກເຜົາຜານ.” (ເອຊາຢາ 24:1 ດັດແປງຈາກສະບັບລາວບູຮານ; 3 ດັດແປງຈາກສະບັບ TNCV; 5–6 THSV). *{GC 657.1}*

ແຜ່ນດິນໂລກທັງໝົດປາກົດເໝືອນຖິ່ນແຫ້ງແລ້ງກັນດານອັນຮົກຮ້າງເປົ່າປ່ຽວ. ຊາກເພພັງຂອງບ້ານເມືອງທີ່ຖືກແຜ່ນດິນໄຫວທຳລາຍ, ຕົ້ນໄມ້ທີ່ຖືກຖອນຮາກຖອນໂຄນ, ກ້ອນຫີນອັນແຫຼມຄົມທີ່ຖືກ

ຄື້ນທະເລຊັດຂຶ້ນມາ ຫຼື ຖືກດັນອອກຈາກໃຕ້ດິນກໍ່ກະຈັດກະຈາຍຢູ່ທົ່ວພື້ນຜິວໂລກ, ແລ້ວມີຫຼຸມຂະໜາດມະຫຶມາໃນບ່ອນທີ່ເຄີຍເປັນພູເຂົາ. {GC 657.2}

ຊາຕານຖືກຄຸມຂັງໄວ້ໃນໂລກ

ພິທີສຸດທ້າຍຂອງວັນລຶບລ້າງບາບໃນພຣະຄຳພີເດີມ ເປັນເງົາສັນຍະລັກຂອງສິ່ງທີ່ຈະເກີດຂຶ້ນ. ຫຼັງຈາກພາລະກິດໃນສະຖານທີ່ສັກສິດທີ່ສຸດສຳເລັດລົງ ແລະ ຄວາມບາບຂອງຊົນຊາດອິດສະຣາເອນໄດ້ຖືກຊຳລະອອກຈາກສະຖານນະມັດສະການແລ້ວ ໂດຍເລືອດຂອງເຄື່ອງບູຊາໄຖ່ບາບ, ເມື່ອນັ້ນ ແບ້ຮັບບາບໄດ້ຖືກນຳມາຢູ່ຕໍ່ໜ້າພຣະພັກອົງພຣະຜູ້ເປັນເຈົ້າໃນຂະນະທີ່ມັນຍັງມີຊີວິດຢູ່. ມະຫາປະໂຣຫິດໄດ້ສາລະພາບບາບຢູ່ເໜືອແບ້ໂຕນັ້ນ ຕໍ່ໜ້າຊຸມຊົນອິດສະຣາເອນທັງປວງ ແລະ ວາງຄວາມບາບຊົ່ວ ແລະ ການລ່ວງລະເມີດທັງສິ້ນຂອງພວກເຂົາລົງເທິງຫົວຂອງແບ້ໂຕນັ້ນ (ເບິ່ງ ລະບຽບພວກເລວີ 16:21). ເຊັ່ນດຽວກັນ, ເມື່ອວຽກງານແຫ່ງການລຶບລ້າງຄວາມບາບໃນສະຖານນະມັດສະການແຫ່ງສະຫວັນສຳເລັດລົງແລ້ວ, ຄວາມບາບຂອງໄພ່ພົນຂອງພຣະເຈົ້າ ຈະຖືກວາງໃສ່ຊາຕານຢູ່ຕໍ່ໜ້າພຣະພັກພຣະເຈົ້າ ແລະ ຕໍ່ໜ້າເຫຼົ່າທູດສະຫວັນກັບຝູງຊົນຜູ້ໄດ້ຮັບການໄຖ່. ຊາຕານຈະຖືກຕັດສິນວ່າມີຄວາມຜິດໃນຄວາມຊົ່ວທັງໝົດທີ່ມັນລໍ້ລວງຄົນຂອງພຣະເຈົ້າໃຫ້ເຮັດ. ແລ້ວຈະເປັນດັ່ງໃນພິທີລຶບລ້າງຄວາມບາບ ທີ່ໂຕແບ້ຮັບບາບຖືກສົ່ງໄປຍັງດິນແດນເປົ່າປ່ຽວ, ຊາຕານກໍຈະຖືກຂັງໄວ້ໃນໂລກທີ່ຮົກຮ້າງເປົ່າປ່ຽວທີ່ບໍ່ມີຜູ້ຄົນອາໄສຢູ່. {GC 658.1}

ໂຢຮັນໄດ້ຂຽນຄຳພະຍາກອນໃນພຣະທຳພຣະນິມິດກ່ຽວກັບການຂັງຊາຕານ ແລະ ສະພາບຂອງໂລກໃນເວລານັ້ນທີ່ມີຄວາມຮົກຮ້າງປັ່ນປ່ວນ; ເພິ່ນປະກາດວ່າສະພາບນີ້ຈະຄົງຢູ່ເປັນເວລາໜຶ່ງພັນປີ. ເຫດການນີ້ຈະເກີດຂຶ້ນ ຫຼັງຈາກການສະເດັດມາຄັ້ງທີສອງຂອງພຣະຄຣິສ ແລະ ການທຳລາຍຄົນອະທຳ, ຕາມທີ່ຂຽນໄວ້ວ່າ: “ແລ້ວຂ້າພະເຈົ້າໄດ້ເຫັນເທວະດາຕົນໜຶ່ງລົງມາຈາກສະຫວັນ, ເພິ່ນຖືກະແຈຂອງເຫວເລິກ ແລະ ຖືໂສ້ເສັ້ນໃຫຍ່. ເພິ່ນໄດ້ຈັບເອົາພະຍານາກ ເຊິ່ງເປັນງູແຕ່ດຶກດຳບັນ ຄື ມານຮ້າຍ ແລະ ມານຊາຕານ ໄດ້ຜູກມັດມັນໄວ້ໃນລະຫວ່າງພັນປີ. ແລ້ວເພິ່ນໄດ້ຖິ້ມມັນລົງໄປໃນເຫວເລິກ ແລະ ໃສ່ກະແຈ ທັງຕີຕາປະທັບໃສ່ດ້ວຍ ເພື່ອບໍ່ໃຫ້ມັນໄດ້ຫຼອກລວງບັນດາປະຊາຊາດທັງຫຼາຍອີກຕໍ່ໄປ ຈົນກວ່າໜຶ່ງພັນປີຜ່ານພົ້ນໄປ. ຫຼັງຈາກນັ້ນ, ມັນຈະຕ້ອງຖືກປ່ອຍໃຫ້ອອກມາພຽງຊົ່ວໄລຍະໜຶ່ງ.” (ພຣະນິມິດ 20:1–3). {GC 658.2}

ຄຳວ່າ “ເຫວເລິກ” ນັ້ນ ໝາຍເຖິງແຜ່ນດິນໂລກໃນສະພາບທີ່ວຸ້ນວາຍ ແລະ ມືດມົນ ດັ່ງທີ່ເຫັນໄດ້ຈາກຂໍ້ພຣະຄຳພີອື່ນໆ. ພຣະຄຳພີຂຽນເຖິງສະພາບຂອງໂລກ “ໃນປະຖົມມະການ” ວ່າ “ຂະນະນັ້ນ ໂລກຍັງບໍ່ມີຮູບຊົງ ແລະ ຫວ່າງເປົ່າ ຄວາມມືດປົກຄຸມຢູ່ເໜືອພື້ນຜິວຂອງຫ້ວງນ້ຳ.” (ປະຖົມມະການ 1:1–2 TNCV). ຄຳວ່າ “ເຫວເລິກ” ໃນພຣະນິມິດບົດທີ 20 ກັບ “ຫ້ວງນ້ຳ” ໃນປະຖົມມະການຂອງພຣະຄຳພີພາສາກຣີກບູຮານ ເປັນຄຳດຽວກັນ. ຄຳພະຍາກອນສອນວ່າ ໂລກຈະກັບຄືນສູ່ສະພາບນີ້ຢ່າງໜ້ອຍກໍ່ບາງສ່ວນ. ເມື່ອເຢເຣມີຢາເຫັນນິມິດເຖິງວັນຍິ່ງໃຫຍ່ຂອງພຣະເຈົ້າ ເພິ່ນກ່າວວ່າ: “ຂ້ານ້ອຍຈ້ອງຕາເບິ່ງແຜ່ນດິນໂລກ ເຫັນເປັນທີ່ຮ້າງຫວ່າງເປົ່າທັງໝົດ ແລະ ແນມເບິ່ງຟ້າສະຫວັນກໍ່ບໍ່ເຫັນແສງສະຫວ່າງໃດໆທັງສິ້ນ. ຂ້ານ້ອຍແນມເບິ່ງພູເຂົາຕ່າງໆພຸ້ນ ມັນກໍສັ່ນສະເທືອນ ແລະ ເນີນພູທັງຫຼາຍກໍໂຊເຊໄປມາດ້ວຍ. ຂ້ານ້ອຍເຫັນວ່າ ໃນທີ່ນັ້ນບໍ່ມີຈັກຄົນເລີຍ ແມ່ນແຕ່ຝູງນົກກໍໄດ້ເຈີດບິນໜີໄປຈົນສິ້ນ. ດິນແດນທີ່ແຕ່ກ່ອນເປັນດິນທີ່ອຸດົມສົມບູນ ກໍກາຍເປັນຖິ່ນແຫ້ງແລ້ງກັນດານໄປສິ້ນ; ເມືອງທັງຫຼາຍກໍຖືກປະໃຫ້ຮົກຮ້າງເພພັງ.” (ເຢເຣມີຢາ 4:23–26). {GC 658.3}

ແຜ່ນດິນໂລກຈະເປັນທີ່ຢູ່ອາໄສຂອງຊາຕານ ແລະ ເຫຼົ່າທູດຂອງມັນເປັນເວລາໜຶ່ງພັນປີ. ມັນຈະຖືກກັກຂັງໃຫ້ຢູ່ແຕ່ໃນໂລກເທົ່ານັ້ນ, ບໍ່ສາມາດເຂົ້າເຖິງໂລກອື່ນໆ ເພື່ອທົດລອງ ຫຼື ລໍ້ກວນຜູ້ທີ່ບໍ່ເຄີຍຕົກໃນຄວາມບາບ. ໃນລັກສະນະນີ້ ມັນຈຶ່ງຖືກຜູກມັດໄວ້ເພາະບໍ່ມີຜູ້ໃດເຫຼືອຢູ່ໃຫ້ມັນລໍ້ລວງ. ມັນຈະບໍ່ສາມາດຫຼອກລວງ ຫຼື ທຳລາຍອີກຕໍ່ໄປ ເຊິ່ງເປັນສິ່ງດຽວທີ່ເຮັດໃຫ້ມັນມີຄວາມສຸກ ແລະ ທີ່ມັນເຮັດມາຫຼາຍພັນປີແລ້ວ. {GC 659.1}

ຜູ້ປະກາດພຣະທຳເອຊາຢາ ໄດ້ເບິ່ງລ່ວງໜ້າເຖິງເວລາທີ່ຊາຕານຈະຖືກໂຄ່ນລົ້ມວ່າ: “ລູຊີເຟີ, ດວງດາວສ່ອງໃສໃນຕອນເຊົ້າເອີຍ ເຈົ້າໄດ້ຕົກລົງຈາກສະຫວັນແລ້ວນໍ. ໃນອະດີດນັ້ນ, ເຈົ້າໄດ້ຕີຊະນະຫຼາຍໆ ຊົນຊາດ . . . ເຈົ້າໄດ້ເວົ້າໃນໃຈວ່າ, ‘ຂ້ອຍຈະຂຶ້ນໄປສະຫວັນ ແລະ ຕັ້ງບັນລັງຂອງຂ້ອຍໄວ້ໃນທີ່ສູງສຸດເໜືອດວງດາວຕ່າງໆ. ຂ້ອຍຈະຕ້ອງນັ່ງດັ່ງກະສັດເທິງພູທາງທິດເໜືອ . . . ຂ້ອຍຈະຕ້ອງຂຶ້ນໄປເໜືອຈອມເມກ ແລະ ເປັນດັ່ງອົງຊົງຣິດອຳນາດຍິ່ງໃຫຍ່.’ ແຕ່ແລ້ວເຈົ້າພັດໄດ້ຖືກຖິ້ມລົງມາສູ່ບ່ອນເລິກທີ່ສຸດຂອງແດນມໍຣະນາ.” “ຄົນທັງຫຼາຍທີ່ເຫັນເຈົ້າກໍເພ່ງຕາເບິ່ງເຈົ້າ, ເຂົາແຍງເບິ່ງເຈົ້າວ່າ: ‘ຜູ້ນີ້ແມ່ນອີ່ຫຼີ, ຜູ້ທີ່ໄດ້ໃຫ້ແຜ່ນດິນຫວັ່ນໄຫວ, ທີ່ໄດ້ໃຫ້ຣາຊອານາຈັກທັງຫຼາຍວຸ້ນວາຍໄປ, ທີ່ໄດ້ທຳລາຍແຜ່ນດິນໂລກໃຫ້ເປັນປ່າ ແລະ ເມືອງທັງຫຼາຍໃນໂລກນັ້ນເພີ່ນໄດ້ມ້າງເສຍ. *ຄົນທັງຫຼາຍທີ່ເພີ່ນໄດ້ຈັບເປັນທາດ ເພີ່ນບໍ່ໄດ້ປ່ອຍຈັກເທື່ອ*.’” (ເອຊາຢາ 14:12–15; 16–17 ສະບັບລາວ ບູຮານ). {GC 659.2}

ເປັນເວລາຫົກພັນປີແລ້ວ ທີ່ການກະບົດຂອງຊາຕານໄດ້ເຮັດໃຫ້ແຜ່ນດິນໂລກສັ່ນສະເທືອນ. ມັນໄດ້ “ທຳລາຍແຜ່ນດິນໂລກໃຫ້ເປັນປ່າ ແລະ ເມືອງທັງຫຼາຍໃນໂລກນັ້ນເພີ່ນໄດ້ມ້າງເສຍ.” “ຄົນທັງຫຼາຍທີ່ເພີ່ນໄດ້ຈັບເປັນທາດ ເພີ່ນບໍ່ໄດ້ປ່ອຍຈັກເທື່ອ.” ເປັນເວລາຫົກພັນປີແລ້ວ ທີ່ໄພ່ພົນຂອງພຣະເຈົ້າຖືກກັກຂັງພາຍໃຕ້ອຳນາດແຫ່ງຄວາມຕາຍ ແລະ ຊາຕານຕັ້ງໃຈຈະກັກຂັງພວກເຂົາໄວ້ຕະຫຼອດໄປ. ແຕ່ພຣະຄຣິສໄດ້ທຳລາຍໂສ້ຂອງມັນແລ້ວ ແລະ ປົດປ່ອຍບັນດາຊະເລີຍໃຫ້ເປັນອິດສະຫຼະ. {GC 659.3}

ບັດນີ້, ແມ່ນແຕ່ຄົນຊົ່ວກໍຍັງພົ້ນຈາກອຳນາດຂອງຊາຕານ, ເຫຼືອພຽງແຕ່ກຸ່ມທູດຊົ່ວຮ້າຍເທົ່ານັ້ນທີ່ຢູ່ກັບມັນ. ດັ່ງນັ້ນ, ມັນຈຶ່ງມີເວລາທົບທວນເຖິງຜົນຂອງຄຳສາບແຊ່ງທີ່ເກີດຈາກຄວາມບາບ. “ກະສັດທັງປວງຂອງບັນດາປະຊາຊາດສິ້ນຊີວິດຢ່າງມີກຽດ ຕ່າງກໍຢູ່ໃນຖ້ຳຝັງສົບຂອງຕົນ ແຕ່ທ່ານຖືກແກວ່ງໄກອອກໄປຈາກຂຸມສົບຂອງທ່ານ ເໝືອນກິ່ງໄມ້ທີ່ຖືກຕັດຖິ້ມຈາກຕົ້ນ . . . ທ່ານຈະບໍ່ຖືກຝັງດ້ວຍກັນກັບກະສັດອື່ນໆ ເພາະທ່ານໄດ້ເຮັດໃຫ້ແຜ່ນດິນຂອງທ່ານພິນາດຍ່ອຍຍັບ; ທ່ານໄດ້ຂ້າຊົນຊາດຂອງທ່ານ.” (ເອຊາຢາ 14:18–20 ດັດແປງຈາກສະບັບ NTV). {GC 660.1}

ຊາຕານຈະທ່ຽວໄປມາໃນໂລກທີ່ຮ້າງເປົ່າເປັນເວລາໜຶ່ງພັນປີ ແລະ ຈະໄດ້ເຫັນຜົນຂອງການກະບົດຕໍ່ພຣະບັນຍັດຂອງພຣະເຈົ້າ. ໃນຊ່ວງເວລານີ້ ມັນຈະທົນທຸກທໍລະມານຢ່າງສາຫັດ. ນັບຕັ້ງແຕ່ມັນລົ້ມລົງໃນຄວາມບາບ ມັນບໍ່ເຄີຍຢຸດພັກ ຫຼື ຢູ່ລ້ຳໆ ຈຶ່ງບໍ່ເຄີຍມີເວລາໄຕ່ຕອງ; ແຕ່ບັດນີ້ມັນສິ້ນຣິດເສຍແລ້ວ ແລະ ຖືກປະໄວ້ໃຫ້ພິຈາລະນາເບິ່ງການກະທຳຂອງຕົນ ນັບແຕ່ມັນເລີ່ມກະບົດຕໍ່ການປົກຄອງຂອງສະຫວັນ. ມັນຈຶ່ງຕ້ອງຫວາດຫວັ່ນ ເມື່ອຄິດເຖິງອະນາຄົດອັນໜ້າຢ້ານກົວທີ່ມັນຈະຕ້ອງຮັບໂທດສຳລັບຄວາມຊົ່ວທັງໝົດທີ່ມັນໄດ້ກະທຳ ແລະ ຈະຖືກລົງໂທດສຳລັບຄວາມບາບທີ່ມັນຍົວະໃຫ້ຄົນອື່ນກະທຳ. {GC 660.2}

ການທີ່ຊາຕານຖືກຄຸມຂັງ ຈະນຳຄວາມຊຶມເຊົາຍິນດີມາສູ່ໄພ່ພົນຂອງພຣະເຈົ້າ. ຜູ້ເຜີຍພຣະທຳໄດ້ກ່າວວ່າ: “ພຣະເຈົ້າຢາເວຈະໃຫ້ປະຊາຊົນອິດສະຣາເອນ ໄດ້ບັນເທົາຈາກຄວາມເຈັບປວດ ແລະ ຄວາມທົນທຸກຂອງພວກເຂົາ ແລະຈະໃຫ້ພວກເຂົາພົ້ນຈາກການຖືກບັງຄັບໃຫ້ເຮັດວຽກໜັກ. ເມື່ອພຣະອົງ

ກະທຳການນັ້ນ ພວກເຂົາຈະເວົ້າເຍາะเย้ยกะสัดแห่งบาบิโลน[2] ว่า: 'ກະสัดผู้ร้ายกาดได้ลົ້ມລົງแล้ว . . . พระเจ้ายาเวได้เธัดใต้อำนาดของพวกผู้ปกครองที่ชั่วร้ายสิ้นสุดไป ถือผู้กดขี่ปะชาชนย่างโหดร้าย และ บ่ได้ยุดเส้นข้าชนชาดทั้งหลายที่พวกถนตีได้นั้น.'" (เอซายา 14:3–6). *{GC 660.3}*

ภารตัดสินกำนดโทด

ในไลยะซึ่งพันปีละหว่างภารฟื้นคืนชีบครั้งทำอิด และ ภารฟื้นจากดวามตายครั้งที่สองนั้น, จะมีภารพิพากสาถนอะทำ. อัครสาวกโปโลได้ชี้ใต้เห็นว่า ภารพิพากสานี้จะเกิดขึ้นพายหลังภารสะเดัดมาครั้งที่สอง, โดยเพิ่นขียนไว้ว่า: "เพาะสะนั้น, พวกเจ้าจึ่งบ่ดวนตัดสินถนใดถนึ่ง ก่อนเถิงเอลาที่ได้กำนดไว้ จนกว่าอ้ายพระผู้เป้นเจ้าสะเดัดมาปากด; พระอ้ายจะชิงเปิดเผียดวามลับที่เซื่องไว้ในดวามมืดนั้นใต้แจ่มแจ้ง และ พระอ้ายจะเปิดเผียดวามนึกถิดอันเลิกลับในใจมะนุด." (1 โกรินโท 4:5). ผู้เผียพระทำดานิเอน ก่าวว่า เมื่อผู้จะเลินด้อยไอยะวุดสะเดัดมา ภารพิพากสาจะ "ถืกมอบใต้แก่บันดาผู้บໍริสุดของอ้ายผู้สูงสุดนั้น." (ดานิเอน 7:22 THSV). ในเวลานั้น, ถนชอบทำจะปกครองต่ำพระพักพระเจ้าในถานะกะสัด และ ปะโรหิด. ในพระทำพระนิมิด โยรันได้ก่าว่า: "แล้วข้าพะเจ้าได้เห็นบันลังหลายอัน และ ผู้ที่นั่งเทิงบันลังนั้น เป้นผู้ที่ได้รับพระธาชาน อำนาดพิพากสา." "พวกเขาจะได้เป้นปะโรหิดของพระเจ้า และ ของพระคริสต ทั่งจะคุ้มครองร่อมกับพระอ้ายในละหว่างพันปี." (พระนิมิด 20:4, 6). ในเวลานี้เองที่ถ้อยคำของอาจารยโปโลจะสำเล็ดที่ก่าว่า: "ปะชากอบของพระเจ้าจะพิพากสาโลก." (1 โกรินโท 6:2 TNCV). พวกเขาจะร่อมกับพระคริสในภารพิพากสาถนอะทำ โดยปรับทรับภารกะทำของพวกเขากับพระคำพี และ ตัดสินทุกคะดีตามภารกะทำที่เธัดในขะนะที่มีชีวิด. หลังจากนั้น, โทดที่ถนชั่วต้องได้รับจะถืกกำนดตามภารกะทำของแต่ละถน และ จะถืกบันทึกไว้ลงข้างชื่อของพวกเขา ในทะบุนแห่งดวามตาย. *{GC 660.4}*

พระเยซู และ ไพ่พินของพระอ้ายจะพิพากสาตัดสินซาตาน พ้อมด้วยเจ้าหูดของมัน. ดั่งที่อาจารยโปโลขียนไว้ว่า: "พวกเธาจะตัดสินบันดาเทอะดา." (1 โกรินโท 6:3). ส่วนยูดาก่ายืนยันว่า: "บันดาเทอะดา ที่บ่ยู่ในขอบเขดแห่งสิดอำนาดของถ้น, แต่ได้ปะถิ้มบ่อนยู่อาไสของถ้นเอง พวกเขาได้ถืกปะไว้ในดวามมืดเบื้องลุ่ม, ถืกล่ามโส่ไว้ตะหลอดไปสำลับอันยิ่งใหย่ที่จะมีภารตัดสินลงโทด." (ยูดา 1:6). *{GC 661.1}*

เมื่อคบธอบพันปีจะมีภารฟื้นคืนชีบครั้งที่สอง. ในเวลานั้น, ถนอะทำจะฟื้นจากดวามตาย และ จะต้องปากดตัวต่ำพระพักพระเจ้า "เพื่อจะเธัดแก่เขาทั้งหลายตามคำพิพากสาที่บันทึกไว้แล้ว." (เพงสันละเสิน 149:9 ดัดแปงจากสะบับ THSV). หลังจากที่อะทิบายเถิงภารฟื้นคืนชีบของถนชอบทำแล้ว, โยรันได้ขียนไว้ว่า: "ถนอื่น ๆ ที่ตายแล้วบ่ได้กับคืนมีชีวิดอีก จนกว่าพันปีนั้นล่วงไปแล้ว." (พระนิมิด 20:5). ส่วนเอซายาได้ก่าวเถิงถนอะทำว่า "พวกเขาจะถืกคุมตัวธอมกัน เพือนนักโทดที่ถืกขังไว้ในคุกใต้ดิน; พวกเขาจะถืกจองจำไว้ และ *หลังจากนั้นหลายอันกำถืกลงโทด.*" (เอซายา 24:22 TNCV). *{GC 661.2}*

[2] พระคำพิตอนนี้ได้ใช้กะสัดแห่งบาบิโลนเป้นสันยะลักของซาตาน.



“ໝາປ່າກັບລູກແກະຈະອາໄສຢູ່ນຳກັນ, ເສືອດາວຈະນອນຢູ່ຂ້າງລູກແບ້...ແລະ ເດັກນ້ອຍຄົນ
ໜຶ່ງຈະນຳພາພວກມັນ.” ພຣະເຈົ້າຊົງກ່າວວ່າ: “ພວກມັນຈະບໍ່ເຮັດຮ້າຍ ຫຼື
ທຳລາຍກັນ ຕະຫຼອດທົ່ວພູເຂົາສັກສິດຂອງເຮົາ.” (ເອຊາຢາ 11:6, 9 LCV).

ເບິ່ງໜ້າ 546.

Image generated with AI (Google Gemini).

42

ຄວາມຂັດແຍ້ງສິ້ນສຸດລົງ

ຄົນອະທຳຟື້ນຈາກຄວາມຕາຍ

ເມື່ອໄລຍະເວລາໜຶ່ງພັນປີສິ້ນສຸດລົງ ພຣະຄຣິສຈະສະເດັດກັບມາຍັງແຜ່ນດິນໂລກອີກຄັ້ງໜຶ່ງ ພ້ອມດ້ວຍບັນດາຜູ້ທີ່ໄດ້ຮັບການຊົງໃຖ່ ແລະ ທູດສະຫວັນໝູ່ໃຫຍ່. ໃນຂະນະທີ່ສະເດັດມາດ້ວຍຣັດສະໝີພາບອັນເຈີດຈ້າ ພຣະອົງຈະຊົງເອີ້ນຄົນອະທຳທັງຫຼາຍທີ່ຕາຍແລ້ວນັ້ນ ໃຫ້ຟື້ນຄືນມາເພື່ອຮັບໂທດ. ຄົນເຫຼົ່ານັ້ນມີຈຳນວນຫຼວງຫຼາຍ ຈົນນັບບໍ່ຖ້ວນດັ່ງເມັດຊາຍຢູ່ແຄມທະເລ, ມີລັກສະນະທີ່ແຕກຕ່າງຢ່າງສິ້ນເຊີງ ກັບພວກຄົນທີ່ໄດ້ຟື້ນຄືນຊີບໃນການຟື້ນຈາກຄວາມຕາຍຄັ້ງທຳອິດ. ເມື່ອຄົນຊອບທຳເປັນຂຶ້ນມານັ້ນ ກໍມີຄວາມສວຍງາມຫຼໍ່ເຫຼົາດັ່ງໜຸ່ມສາວອະມະຕະທີ່ບໍ່ຮູ້ຈັກແກ່, ແຕ່ຄົນອະທຳນັ້ນ ເປັນຂຶ້ນມາໂດຍຍັງມີຮ່ອງຮອຍຂອງໂຣຄາພະຍາດ ແລະ ຄວາມຕາຍ. *{GC 662.1}*

ຕາທຸກໜ່ວຍຂອງຝູງຊົນຈຳນວນມະຫາສານນັ້ນ ຈັບຈ້ອງຢູ່ທີ່ພຣະຣັດສະໝີແຫ່ງພຣະບຸດຂອງພຣະເຈົ້າ. ຄົນອະທຳເຫຼົ່ານັ້ນຮ້ອງຂຶ້ນເປັນສຽງດຽວກັນວ່າ: “ຂໍພຣະເຈົ້າອວຍພອນທ່ານຜູ້ທີ່ສະເດັດມາໃນນາມຂອງອົງພຣະຜູ້ເປັນເຈົ້າ.” (ມັດທາຍ 23:39). ການທີ່ຮ້ອງຖ້ອຍຄຳເຫຼົ່ານັ້ນ ບໍ່ແມ່ນຍ້ອນພວກເຂົາຮັກພຣະເຢຊູ, ແຕ່ເປັນເພາະພະລັງແຫ່ງຄວາມຈິງກະຕຸ້ນພວກເຂົາໃຫ້ເວົ້າອອກມາ ແມ່ນວ່າຈະບໍ່ເຕັມໃຈກໍຕາມ. ຄົນອະທຳເຫຼົ່ານັ້ນເຄີຍເສຍຊີວິດລົງຢ່າງໃດກໍເປັນຂຶ້ນມາຢ່າງນັ້ນ ຄືຍັງມີຄວາມຈົງກຽດຈົງຊັງຕໍ່ພຣະຄຣິສ ແລະ ຈິດໃຈແຂງກະດ້າງຄືເກົ່າ. ພວກເຂົາຈະບໍ່ໄດ້ຮັບໂອກາດອີກ ເພື່ອປັບປຸງແກ້ໄຂຄວາມຜິດພາດໃນຊີວິດທີ່ຜ່ານມາ ເພາະວ່າຈະບໍ່ມີປະໂຫຍດ. ການລະເມີດກົດບັນຍັດຂອງພຣະເຈົ້າຕະຫຼອດຊີວິດ ບໍ່ໄດ້ເຮັດໃຫ້ຈິດໃຈຂອງພວກເຂົາອ່ອນລົງ. ຖ້າໃຫ້ໂອກາດອີກ ພວກເຂົາກໍຈະເຮັດຄືເກົ່າ ຄືຫຼົບຫຼີກຈາກຂໍ້ກຳນົດຂອງພຣະເຈົ້າ ແລະ ຍຸຍົງໃຫ້ມີການກະບົດຕໍ່ພຣະອົງ. *{GC 662.2}*

ພຣະຄຣິສສະເດັດລົງເທິງພູເຂົາໝາກກອກເທດ ອັນເປັນສະຖານທີ່ແຫ່ງດຽວກັນທີ່ພຣະອົງສະເດັດຂຶ້ນສະຫວັນຫຼັງຈາກທີ່ຟື້ນພຣະຊົນ, ແລະເປັນບ່ອນດຽວກັນທີ່ເຫຼົ່າທູດສະຫວັນໄດ້ທົບທວນພຣະສັນຍາເລື່ອງການສະເດັດກັບມາຂອງພຣະອົງ. ຜູ້ເຜີຍພຣະທຳກ່າວວ່າ: “ພຣະເຈົ້າຂອງຂ້າພະເຈົ້າ ຈະມາພ້ອມດ້ວຍຝູງເທວະດາທັງໝົດຂອງພຣະອົງ.” “ພຣະອົງຈະຢືນຢູ່ທີ່ເທິງພູເຂົາໝາກກອກເທດ ທີ່ທາງທິດຕາເວັນອອກຂອງນະຄອນເຢຣູຊາເລັມ. ແລ້ວພູເຂົາໝາກກອກເທດ ກໍຈະແຍກອອກເປັນສອງສ່ວນ . . . ໂດຍມີຮ່ອມພູອັນກວ້າງຂວາງຢູ່ຫວ່າງກາງ.” “ແລ້ວພຣະເຈົ້າຢາເວກໍຈະເປັນກະສັດປົກຄອງແຜ່ນດິນໂລກນີ້ທັງໝົດ; ໃນວັນນັ້ນ, ຈະມີພຣະເຈົ້າຢາເວແຕ່ອົງດຽວ ແລະ ມີນາມຊື່ຂອງພຣະອົງແຕ່ນາມດຽວເທົ່ານັ້ນ.” (ເຊກາຣີຢາ 14:5, 4, 9). ນະຄອນເຢຣູຊາເລັມໃໝ່ລົງມາຈາກສະຫວັນ ດ້ວຍແສງຣັດສະໝີອັນແວວວາວ, ຕັ້ງຢູ່ເທິງບ່ອນທີ່ໄດ້ຮັບການຊຳລະ ແລະ ຖືກຈັດຕຽມໄວ້ເພື່ອຮອງຮັບ

ນະຄອນນັ້ນ; ແລ້ວພຣະຄຣິສພ້ອມດ້ວຍໄພ່ພົນຂອງພຣະອົງພ້ອມກັບເຫຼົ່າທູດສະຫວັນ ກໍເຂົ້າໄປໃນ ນະຄອນບໍຣິສຸດ. {GC 662.3}

ບັດນີ້, ຊາຕານກຽມຕົວເພື່ອການຕໍ່ສູ້ຢຶດອຳນາດເປັນຄັ້ງສຸດທ້າຍ. ໃນຂະນະທີ່ມັນສິ້ນຣິດ ແລະ ຖືກ ຕັດຂາດຈາກໂອກາດທີ່ຈະຫຼອກລວງຢູ່ນັ້ນ ມັນຮູ້ສຶກຫົດໜູ ແລະ ເປັນທຸກ, ແຕ່ເມື່ອຄົນອະທຳເປັນຂຶ້ນ ມາຈາກຄວາມຕາຍ ແລະ ມັນເຫັນຝູງຊົນຈຳນວນມະຫາສານຢູ່ຝ່າຍຂອງຕົນ, ມັນຈຶ່ງເກີດຄວາມຫວັງ ຂຶ້ນມາອີກຄັ້ງໜຶ່ງ ແລະ ຕັ້ງໃຈວ່າຈະບໍ່ຍອມແພ້ໃນການຕໍ່ສູ້ມະຫາກາບ. ມັນຕັ້ງຕົ້ນຮວບຮວມກຳລັງ ມະຫາຊົນທຸກຄົນທີ່ບໍ່ໄດ້ຮັບຄວາມລອດໃຫ້ມາຢູ່ໃຕ້ທຸງຂອງມັນ ເພື່ອຈະນຳໃຊ້ພວກເຂົາຕາມແຜນອຸບາຍ ຂອງມັນ. ຄົນອະທຳເປັນຂະເລີຍເສິກຂອງຊາຕານ ເພາະເມື່ອພວກເຂົາປະຕິເສດພຣະຄຣິສ ກໍເທົ່າກັບ ເປັນການຍອມຮັບເອົາການປົກຄອງຂອງຈອມກະບົດ. ພວກເຂົາພ້ອມທີ່ຈະຟັງຄຳແນະນຳ ແລະ ເຮັດ ຕາມຄຳສັ່ງຂອງມັນ. ຊາຕານຍັງໃຊ້ເລ່ຫ່ຽມຄືເກົ່າ ໂດຍບໍ່ເປີດເຜີຍຕົວເອງວ່າມັນຄືຊາຕານ. ມັນອ້າງ ວ່າຕົນເປັນເຈົ້າຊີວິດຂອງໂລກໂດຍຊອບທຳ, ແຕ່ວ່າໂລກນີ້ຖືກຍາດເອົາຈາກມັນຢ່າງບໍ່ເປັນທຳ. ມັນ ບອກກັບພວກທີ່ຫຼົງຢູ່ຝ່າຍຂອງມັນວ່າ ມັນເປັນພຣະຜູ້ໄຖ່ທີ່ໃຫ້ພວກເຂົາເປັນຂຶ້ນຈາກຄວາມຕາຍ ດ້ວຍອຳນາດຂອງມັນເອງ; ແລະບັດນີ້, ມັນຈະປົດປ່ອຍພວກເຂົາອອກຈາກອຳນາດຜະເດັດການທີ່ ໂຫດຫ້ຽມທີ່ສຸດ. ໃນເມື່ອພຣະຄຣິສບໍ່ໄດ້ສະຖິດຢູ່ກັບຄົນເຫຼົ່ານັ້ນ ຊາຕານຈຶ່ງເຮັດອິດທິຣິດຕ່າງໆ ເພື່ອສະໜັບສະໜູນຂໍ້ອ້າງຂອງຕົນ. ມັນເຮັດໃຫ້ຜູ້ທີ່ອ່ອນແອກັບມາເຂັ້ມແຂງ ແລະ ດົນໃຈທຸກ ຄົນດ້ວຍອຸດົມການ ແລະ ພະລັງຂອງມັນເອງ. ຊາຕານສະເໜີທີ່ຈະນຳພວກເຂົາໃຫ້ໂຈມຕີໄພ່ພົນ ຂອງພຣະເຈົ້າ ແລະ ຢຶດເອົານະຄອນຂອງພຣະອົງ. ດ້ວຍຄວາມອວດອົ່ງທະນົງຕົວ ມັນຊີ້ໄປຍັງ ຄົນຈຳນວນຫຼວງຫຼາຍອັນນັບບໍ່ຖ້ວນທີ່ເປັນຂຶ້ນມາຈາກຄວາມຕາຍ ແລ້ວປະກາດວ່າ ໃນຖານະ ຜູ້ນຳພວກເຂົາ ມັນຈະສາມາດຕີຊະນະນະຄອນ ແລະ ຢຶດເອົາບັນລັງກັບອານາຈັກທີ່ເປັນຂອງ ຕົນ. {GC 663.1}

ໃນຝູງຊົນມະຫຶມານັ້ນ ມີພວກຄົນອາຍຸຍືນຈາກສະໄໝກ່ອນນ້ຳຖ້ວມໂລກ, ເປັນຄົນສູງໃຫຍ່ ແລະ ມີ ສະຕິປັນຍາອັນສະຫຼຽວສະຫຼາດ. ຄົນເຫຼົ່ານີ້ຍອມໃຫ້ທູດຂອງຊາຕານເຂົ້າຄວບຄຸມ ຈົນພວກເຂົາໃຊ້ສຸດ ຄວາມຮູ້ ແລະ ຄວາມສາມາດໃນການຍົກຍໍຕົນເອງ. ປະຊາຊົນໃນໂລກບູຮານໄດ້ຫຼົງໄຫຼເຄົາລົບບູຊາຄົນ ເຫຼົ່ານັ້ນ ເນື່ອງຈາກສະຕິປັນຍາອັນແຫຼມຄົມທີ່ຄິດຄົ້ນຜົນງານອັນໜ້າອັດສະຈັນ. ແຕ່ພວກເຂົາເປັນຄົນ ໂຫດຮ້າຍ ແລະ ໄດ້ຄິດຄົ້ນອຸປະກອນຕ່າງໆທີ່ອຳນວຍຄວາມຊົ່ວ, ເຮັດໃຫ້ແຜ່ນດິນໂລກເຕັມໄປດ້ວຍ ມົນທິນບາບ ແລະ ທຳລາຍພຣະລັກສະນະຂອງພຣະເຈົ້າ. ທັງໝົດນີ້ ເປັນເຫດໃຫ້ພຣະເຈົ້າຊົ່ງລຶບລ້າງ ຄົນເຫຼົ່ານັ້ນອອກຈາກພື້ນພິພົບທີ່ພຣະອົງຊົ່ງສ້າງ ໂດຍໃຫ້ນ້ຳຖ້ວມໂລກ. ທ່າມກາງຊຸມນຸມຊົນໃຫຍ່ນັ້ນກໍ ມີບັນດາກະສັດ ແລະ ນາຍພົນທີ່ຊະນະຊົນຊາດອື່ນ, ຄືຊາຍສະກັນທີ່ບໍ່ເຄີຍປະລາໄຊໃນສົງຄາມ ເປັນ ນັກຮົບທີ່ອົງອາດ ແລະ ທະເຍີທະຍານ. ຄົນເຫຼົ່ານີ້ເມື່ອມີຊີວິດຢູ່ກໍເຮັດໃຫ້ບັນດາອານາຈັກໃນໂລກສັ່ນ ສະທ້ານ. ພາວະການຕາຍບໍ່ໄດ້ປ່ຽນນິໄສຂອງຄົນເຫຼົ່ານັ້ນ. ເມື່ອເປັນຂຶ້ນມາຈາກຄວາມຕາຍ ພວກເຂົາກໍ ສືບຕໍ່ຄວາມຄິດຈາກຈຸດເດີມເມື່ອຄາວທີ່ເສຍຊີວິດໄປ ແລະ ຍັງຄົງມີຄວາມຢາກສູ້ເອົາຊະນະອັນດຽວກັນ ທີ່ມີໃນຄາວທີ່ລົ້ມຕາຍ. {GC 664.1}

ການຕໍ່ສູ້ກັບພຣະເຈົ້າຄັ້ງສຸດທ້າຍ

ຊາຕານປຶກສາກັບບັນດາທູດຂອງມັນ ແລ້ວຈຶ່ງປຶກສາກັບພວກກະສັດ, ນາຍພົນ ແລະ ນັກຮົບຜູ້ ເກ່ັງກາດເຫຼົ່ານັ້ນ. ພວກເຂົາສະຫຼຸບວ່າ ຝ່າຍຂອງຕົນມີກຳລັງ ແລະ ມີຈຳນວນຫຼາຍກວ່າ ເມື່ອທຽບ ກັບກອງທັບທີ່ຢູ່ພາຍໃນນະຄອນ ຈຶ່ງປະກາດວ່າຈະສາມາດຢຶດເອົານະຄອນນັ້ນໄດ້. ພວກເຂົາວາງແຜນ

ທີ່ຈະຢຶດເອົາຊັບສິນ ແລະ ສະຫງ່າຣາສີຂອງນະຄອນເຢຣູຊາເລັມໃໝ່; ທຸກຄົນຈຶ່ງກຽມຕົວທັນທີເພື່ອການຕໍ່ສູ້. ພວກນາຍຊ່າງທີ່ມີຝີມືດີກໍພາກັນຜະລິດອາວຸດຍຸດໂທປະກອນ. ສ່ວນຄົນທີ່ມີຊື່ສຽງໃນການນຳກອງທັບກໍຮວບຮວມນັກຮົບ ແລະ ແບ່ງອອກເປັນໜ່ວຍເປັນກອງ. {GC 664.2}

ໃນທີ່ສຸດກໍມີຄຳສັ່ງໃຫ້ເຄື່ອນທັບ, ກອງກຳລັງທີ່ນັບບໍ່ຖ້ວນຈຶ່ງເຄື່ອນໄປເປັນກອງທັບທີ່ໃຫຍ່ມະຫາສານກວ່າທີ່ນາຍພົນຄົນໃດໃນໂລກເຄີຍບັນຊາມາກ່ອນ. ຖ້າເອົາກອງທັບທັງຫຼາຍໃນປະຫວັດສາດມະນຸດ ໃນທຸກຍຸກທຸກສະໄໝມາຮວມກັນກໍຍັງບໍ່ເທົ່າກັບກອງກຳລັງໃນຄັ້ງນີ້. ຊາຕານຜູ້ເປັນນັກຮົບທີ່ຍິ່ງໃຫຍ່ທີ່ສຸດ ກຳນຳກອງທັບເອງ ແລະ ບັນດາທູດຂອງມັນກໍເຂົ້າຮ່ວມ ເພື່ອການຕໍ່ສູ້ຄັ້ງສຸດທ້າຍນີ້. ບັນດາກະສັດ ແລະ ນັກຮົບທັງຫຼາຍກໍຕາມຊາຕານ, ສ່ວນມະຫາຊົນທົ່ວໄປກໍຕາມເປັນກອງໆ ໂດຍມີການຈັດຕັ້ງຜູ້ນຳໃຫ້ກັບແຕ່ລະກອງ. ກອງທັບອັນໜາແໜ້ນນັ້ນ ເຄື່ອນໄປສູ່ນະຄອນຂອງພຣະເຈົ້າດ້ວຍການເປັນລະບຽບ ເໝືອນກອງທັບທີ່ຜ່ານການຝຶກຕາມວິຊາທະຫານ ແມ່ນວ່າພື້ນພິພົບໂລກນັ້ນຈະແຕກລະແຫງກໍຕາມ. ພຣະເຢຊູສັ່ງໃຫ້ປິດປະຕູທຸກບານຂອງນະຄອນເຢຣູຊາເລັມໃໝ່ ໃນຂະນະທີ່ກອງທັບທັງຫຼາຍຂອງຊາຕານລ້ອມນະຄອນໄວ້ ແລະ ກຽມຕົວເພື່ອໂຈມຕີ. {GC 664.3}

ບັດນີ້, ພຣະຄຣິສປາກົດອີກຄັ້ງໜຶ່ງໃຫ້ພວກສັດຕູໄດ້ເຫັນ. ມີບັນລັງຕັ້ງຢູ່ສູງເໜືອນະຄອນ; ຖານຂອງບັນລັງນັ້ນ ເປັນຄຳບໍຣິສຸດທີ່ຂັດມັນແວວວາວ. ພຣະບຸດຂອງພຣະເຈົ້າປະທັບເທິງບັນລັງນັ້ນ; ບັນດາໄພ່ພົນແຫ່ງອານາຈັກຂອງພຣະອົງລ້ອມຮອບພຣະອົງ. ບໍ່ມີພາສາໃດສາມາດບັນລະຍາຍເຖິງຣິດອຳນາດ ແລະ ສະຫງ່າຣາສີຂອງພຣະອົງ; ບໍ່ມີສຳນວນໃດສາມາດພັນລະນາໃຫ້ເຫັນພາບ. ຣັດສະໝີພາບຂອງພຣະບິດາອົງນິຣັນຫ໋ຫຸ້ມພຣະບຸດໄວ້. ແສງສະຫວ່າງທີ່ສາຍອອກຈາກພຣະອົງ ສ່ອງເຕັມພຣະນະຄອນຂອງພຣະເຈົ້າ ແລະ ສ່ອງອອກທາງປະຕູເມືອງ ຈົນແຜ່ນດິນໂລກສະຫວ່າງສະໄຫວໄປດ້ວຍແສງຣັດສະໝີນັ້ນ. {GC 665.1}

ຜູ້ທີ່ຢູ່ໃກ້ບັນລັງທີ່ສຸດ ຄືພວກທີ່ເຄີຍຮັບໃຊ້ຊາຕານດ້ວຍຄວາມກະຕືລືລົ້ນ ແຕ່ໄດ້ຮັບຄວາມລອດພົ້ນເໝືອນດັ່ງດົ້ນຟືນທີ່ຖືກດຶງອອກຈາກກອງໄຟ. ຄົນເຫຼົ່ານີ້ໄດ້ຕິດຕາມອົງພຣະຜູ້ຊ່ວຍໃຫ້ລອດຢ່າງສຸດຈິດສຸດໃຈ. ຖັດອອກໄປ ກໍເປັນພວກທີ່ໄດ້ຝຶກອຸປະນິໄສຄຣິສຕຽນຈົນສົມບູນ ທ່າມກາງສິ່ງແວດລ້ອມທີ່ເຕັມໄປດ້ວຍຄວາມເຊື່ອຖືທີ່ບໍ່ເປັນຄວາມຈິງ ແລະ ຄົນທີ່ບໍ່ສັດຊື່ຕໍ່ພຣະເຈົ້າ. ຄົນເຫຼົ່ານີ້ໃຫ້ກຽດກົດບັນຍັດຂອງພຣະເຈົ້າ ໃນຂະນະທີ່ວົງການຄຣິສຕຽນທົ່ວໄປພາກັນປະກາດວ່າ ກົດບັນຍັດດັ່ງກ່າວຖືກຍົກເລີກແລ້ວ. ໃນກຸ່ມນີ້ ກໍມີຄົນນັບລ້ານຈາກທຸກຍຸກທຸກສະໄໝທີ່ຖືກຂ້າຍ້ອນຄວາມເຊື່ອ. ແລ້ວຖັດໄປອີກກໍຄື “ປະຊາຊົນຫຼວງຫຼາຍຈົນນັບບໍ່ຖ້ວນ; ພວກເຫຼົ່ານີ້ມາຈາກທຸກປະເທດ, ທຸກເຜົ່າ, ທຸກຊົນຊາດ, ທຸກພາສາ, ຄົນເຫຼົ່ານີ້ນຸ່ງເສື້ອຄຸມສີຂາວ ຖືກ້ານຕານຢືນຢູ່ຕໍ່ໜ້າບັນລັງ ແລະ ຊ້ອງໜ້າພຣະເມສານ້ອຍ.” (ພຣະນິມິດ 7:9). ການຕໍ່ສູ້ຂອງຄົນເຫຼົ່ານີ້ໄດ້ສິ້ນສຸດລົງ, ໄຊຊະນະເປັນຂອງພວກເຂົາ. ພວກເຂົາໄດ້ແລ່ນແຂ່ງຂັນຈົນເຖິງເສັ້ນໄຊ. ກ້ານຕານໃນມືຂອງພວກເຂົານັ້ນ ເປັນສັນຍະລັກແຫ່ງໄຊຊະນະ; ສ່ວນເສື້ອຄຸມສີຂາວ ໝາຍເຖິງຄວາມຊອບທຳອັນບໍຣິສຸດຂອງພຣະຄຣິສ ທີ່ບັດນີ້ເປັນຂອງພວກເຂົາແລ້ວ. {GC 665.2}

ບັນດາຜູ້ທີ່ໄດ້ຮັບການຊົ່ງໃຫ່ ໄດ້ຮ້ອງເພງສັນລະເສີນທີ່ກ້ອງກັງວານໄປທົ່ວຟ້າສະຫວັນວ່າ: “ຄວາມລອດພົ້ນຂຶ້ນຢູ່ກັບພຣະເຈົ້າຂອງພວກເຮົາ ຜູ້ຊົງປະທັບຢູ່ເທິງພຣະຣາຊບັນລັງ ແລະ ຂຶ້ນກັບພຣະເມສານ້ອຍ.” (ພຣະນິມິດ 7:10). ພວກທູດສະຫວັນ ແລະ ເສຣາຟິມ ຮ່ວມປະສານສຽງຮ້ອງເພງສັນລະເສີນ. ເມື່ອຜູ້ທີ່ໄດ້ຮັບການຊົ່ງໃຫ່ເຫັນຣິດອຳນາດ ແລະ ຄວາມຊົ່ວຮ້າຍຂອງຊາຕານ ພວກເຂົາຈຶ່ງຊາບຊຶ້ງຢ່າງທີ່ບໍ່ເຄີຍເປັນມາກ່ອນວ່າ ມີແຕ່ພຣະຄຣິສເທົ່ານັ້ນທີ່ສາມາດນຳໄຊຊະນະໃຫ້ກັບພວກເຂົາໄດ້. ທ່າມກາງບັນດາຄົນທັງຫຼາຍທີ່ໃສ່ເສື້ອຂາວຢ່າງສະຫວ່າງສະໄຫວນັ້ນ ບໍ່ມີຜູ້ໃດຄິດວ່າຕົນໄດ້ລອດພົ້ນດ້ວຍການ

ກະທຳຂອງຕົນເອງ ສະເໝີອນໜຶ່ງວ່າຕົນໄດ້ໄຊຊະນະດ້ວຍກຳລັງ ແລະ ຄວາມດີຂອງຕົນເອງ, ບໍ່ມີ ໃຜກ່າວເຖິງຄວາມທຸກຍາກທີ່ຕົນຕ້ອງທົນ, ບໍ່ມີໃຜອ້າງເຖິງພາລະກິດທີ່ຕົນໄດ້ເຮັດ; ແຕ່ເມື່ອຮ້ອງຂອງ ທຸກເພງທີ່ຂັບຂານ ແລະ ປະເດັນສຳຄັນຂອງທຸກເພງທີ່ຂັບຮ້ອງ ລ້ວນແຕ່ມີຄວາມໝາຍວ່າ: ຄວາມ ລອດພົ້ນນັ້ນມາຈາກພຣະເຈົ້າ ແລະ ຈາກພຣະເມສານ້ອຍ. {GC 665.3}

ປະກາດຄຳຕັດສິນຕໍ່ພວກກະບົດ

ພິທີອັນສຸດທ້າຍໃນການສວມມົງກຸດໃຫ້ພຣະບຸດຂອງພຣະເຈົ້າກຳດຳເນີນໄປຕໍ່ໜ້າຊາວໂລກ ແລະ ຊາວສະຫວັນທີ່ຊຸມນຸມກັນຢູ່ນັ້ນ. ບັດນີ້, ໃນຖານະກະສັດເໜືອກະສັດທັງປວງຜູ້ມີຣິດອຳນາດສູງສຸດ, ພຣະອົງຊົງປະກາດຄຳຕັດສິນລົງໂທດຝ່າຍທີ່ກະບົດຕໍ່ການປົກຄອງຂອງພຣະອົງ ແລະ ຊົງລົງໂທດ ບັນດາຜູ້ທີ່ລະເມີດພຣະບັນຍັດຂອງພຣະອົງ ແລະ ກົດຂີ່ຂົ່ມເຫັງໄພ່ພົນຂອງພຣະອົງ. ຜູ້ເຜີຍພຣະທຳ ຂອງພຣະເຈົ້າກ່າວວ່າ: “ຂ້າພະເຈົ້າກໍໄດ້ເຫັນພຣະບັນລັງໃຫຍ່ສີຂາວ ທັງເຫັນພຣະອົງຜູ້ທີ່ນັ່ງຢູ່ເທິງ ບັນລັງນັ້ນ. ເມື່ອພຣະອົງຊົງປາກົດ, ແຜ່ນດິນໂລກ ແລະ ທ້ອງຟ້າກໍພ່າຍໜີ ແລະ ບ່ອນຢູ່ສຳລັບ ແຜ່ນດິນໂລກ ແລະ ທ້ອງຟ້ານັ້ນກໍບໍ່ເຫັນອີກ. ແລະຂ້າພະເຈົ້າໄດ້ເຫັນບັນດາຄົນທີ່ຕາຍແລ້ວ ທັງ ຜູ້ໃຫຍ່ ແລະ ຜູ້ນ້ອຍ ພາກັນຢືນຢູ່ຕໍ່ໜ້າພຣະບັນລັງນັ້ນ, ໜັງສືຕ່າງ ໆ ກໍເປີດອອກ ແລະ ມີ ໜັງສືອີກເຫຼັ້ມໜຶ່ງກໍເປີດອອກເໝືອນກັນ ຄືໜັງສືທະບຽນແຫ່ງຊີວິດ ແລະ ຄົນທັງຫຼາຍທີ່ຕາຍ ແລ້ວ ກໍຖືກຕັດສິນຕາມການກະທຳຂອງພວກເຂົາ ດັ່ງທີ່ມີບັນທຶກໄວ້ໃນໜັງສືເຫຼົ່ານັ້ນ.” (ພຣະນິມິດ 20:11, 12). {GC 666.1}

ເມື່ອໜັງສືບັນທຶກຕ່າງ ໆ ໄດ້ເປີດອອກ ແລະ ພຣະເຢຊູຊົງເບິ່ງໄປຍັງຄົນອະທຳ; ພວກເຂົາຮູ້ສຶກ ທັນທີເຖິງຄວາມບາບທຸກຢ່າງທີ່ເຄີຍກະທຳ. ພວກເຂົາເຫັນຈຸດທີ່ຕົນໄດ້ຫັນອອກຈາກທາງບໍຣິສຸດ, ໄດ້ ເຫັນວ່າຄວາມທະນົງຕົວ ແລະ ຈິດໃຈທີ່ແຂງກະດ້າງ ໄດ້ນຳຕົນໃຫ້ຝ່າຝືນກົດບັນຍັດຂອງພຣະເຈົ້າ ຫຼາຍພຽງໃດ. ບໍ່ວ່າຈະເປັນເລື່ອງຄວາມບາບທີ່ເປັນເຫດໃຫ້ການທົດລອງມີພະລັງ ຫຼື ພຣະພອນທີ່ນຳໃຊ້ ໃນທາງທີ່ຜິດ ຫຼື ການດູຖູກຜູ້ທີ່ພຣະເຈົ້າຊົງໃຊ້ມາເພື່ອຕັກເຕືອນ ຫຼື ການປະຕິເສດຄຳຕັກເຕືອນ ນັ້ນ ຫຼື ການຕໍ່ຕ້ານພຣະເມດຕາຂອງພຣະເຈົ້າດ້ວຍຈິດໃຈທີ່ແຂງກະດ້າງບໍ່ຍອມກັບໃຈ: ສິ່ງເຫຼົ່ານີ້ ທັງໝົດກໍປາກົດແຈ້ງເໝືອນຂຽນດ້ວຍອັກສອນໄຟ. {GC 666.2}

ເໜືອພຣະບັນລັງມີຮູບໄມ້ກາງແຂນປາກົດ ແລະ ມີປາກົດການເໝືອນການສາຍຮູບເງົາເຫດການ ຕ່າງ ໆ ຢ່າງຈະແຈ້ງດັ່ງນີ້: ການຖືກທົດລອງ ແລະ ການຕົກສູ່ຄວາມບາບຂອງອາດາມ ພ້ອມ ດ້ວຍຂັ້ນຕອນຕ່າງ ໆ ຂອງແຜນການສຳຄັນຂອງການໄຖ່ມະນຸດໃຫ້ລອດ; ການບັງເກີດຢ່າງຕ່ຳຕ້ອຍ ຂອງພຣະຜູ້ຊ່ວຍໃຫ້ລອດ; ຊີວິດທີ່ລຽບງ່າຍ ແລະ ການເຊື່ອຟັງຂອງພຣະອົງໃນໄວເດັກ ແລະ ໄວ ໜຸ່ມ; ການຮັບບັບຕິສະມາໃນແມ່ນ້ຳຈໍແດນ; ການອົດອາຫານ ແລະ ການຖືກທົດລອງໃນຖິ່ນແຫ້ງແລ້ງ ກັນດານ; ການປະກາດຂອງພຣະອົງທີ່ຊົງເປີດເຜີຍພຣະພອນອັນລ້ຳຄ່າທີ່ສຸດຈາກສະຫວັນ; ພັນທະກິດ ອັນເຕັມໄປດ້ວຍຄວາມຮັກ ແລະ ຄວາມເມດຕາທີ່ພຣະອົງຊົງກະທຳໃນທາງເວັນ ແລະ ການເຝົ້າ ອະທິຖານຕາມພູເຂົາອັນເປົ່າປ່ຽວໃນທາງຄືນ; ການທີ່ຜູ້ຄົນຕອບສະໜອງຕໍ່ພຣະຄຸນຂອງພຣະເຢຊູ ດ້ວຍຄວາມອິດສາ, ຄວາມກຽດຊັງ ແລະ ການປອງຮ້າຍ; ພາລະອັນໜັກໜ່ວງແຫ່ງຄວາມບາບ ຂອງມວນມະນຸດສະໂລກ ທີ່ບີບຮັດພຣະອົງຢ່າງເລິກລັບໃນສວນເຄັດເຊມາເນ; ການຖືກທໍລະຍົດໃຫ້ ຕົກຢູ່ໃນມືຂອງຝູງຊົນຜູ້ໝາຍເອົາຊີວິດຂອງພຣະອົງ; ເຫດການອັນເປັນຕາໜ້າຕົກຕະລຶງທີ່ເກີດຂຶ້ນ ໃນຄ່ຳຄືນທີ່ຮ້າຍກາດນັ້ນ; ການທີ່ພຣະອົງບໍ່ໄດ້ດິ້ນສູ້ເມື່ອຕົກຢູ່ໃນຖານະນັກໂທດ; ການທີ່ສາວົກຜູ້ ໃກ້ຊິດທີ່ສຸດປະຖິ້ມພຣະອົງ; ການທີ່ພຣະອົງຖືກນຳພາຕາມຖະໜົນຫົນທາງ ໃນນະຄອນເຢຣູຊາເລັມ

ຢ່າງຮຸນແຮງ ແລະ ຮີບດ່ວນ; ການທີ່ພຣະບຸດຂອງພຣະເຈົ້າຖືກນຳອອກມາອວດຕໍ່ໜ້າທ່ານອັນນາ; ຖືກກ່າວຫາໃນສຳນັກຂອງມະຫາປະໂຣຫິດ ແລະ ໃນສຳນັກຂອງປີລາດ; ທັງຕໍ່ໜ້າເຮໂຣດຜູ້ຂີ້ຂາດ ແລະ ໂຫດຮ້າຍນັ້ນ; ພຣະອົງຖືກຄົນເຍາะເຍີ້ຍ, ຖືກດູໝິ່ນ, ຖືກທໍລະມານ ແລະ ຖືກຕັດສິນປะຫານຊີວິດ: ທັງໝົດນີ້ປາກົດແຈ້ງໃນພາບເຄື່ອນໄຫວ ຢູ່ເໜືອພຣะບັນລັງຂອງພຣะອົງ. {GC 666.3}

ບັດນີ້, ມີການສາຍສາກສຸດທ້າຍໃຫ້ຝູງຊົນທີ່ຢືນໂອບເອນຢູ່ນັ້ນເບິ່ງ ຄືພາບຂອງພຣะຄຣິສໃນຂะນะທີ່ອົດທົນກ້າວເທົ້າຢ່າງເດີນໄປສູ່ພູເຂົາຄານວາຣີຢ່າງທຸກທໍລะມານ; ອົງເຈົ້ານາຍແຫ່ງสะຫວັນຖືກຄຶງຢູ່ເທິງໄມ້ກາງแขน; ບັນດาปะໂຣຫິດຜູ້ອວດອົ່ງ ແລະ ຝູງຊົນທີ່ພາກັນເຍาะเຍີ້ຍຄວາມເຈັບปวดຂອງພຣะອົງ ໃນช่วงลົມຫายใจสุดท้าย; ຄວາມມືດທຶบທີ່ເໜືອທຳมะชาด; แผ่นดินที่สะท้านหวั่นไหว; โง่นหินที่แตกเป็นปุ่งๆ ແລะ ອຸบมุงฝังสົบที่เปิดออก ອันเป็นໝุดໝายเถิงเวลาที่พຣะผู้ไถ่ของโลกสิ้นพຣะชົน. {GC 667.1}

ພาบอันสะเทือนใจในอะดีดปากົดขึ้นย่างจะแจ้ง. ซาตานพ้อมด้วยเหล่าทูด ແລะ ผู้ที่ติดตามมัน ก็บ่สามาดหันหน้าหนีไปจากพาบเหล่านั้น ອันเป็นการสะแดงเถิงผົนการกะทำของตົนเอง. ทั้งซาตาน, บันดาทูดของมัน ແລะ ทุกคົนล้อมแต่ละนึกเถิงพากส่วนที่ตົนได้กะทำ; ทุกคົนล้อมแต่ซาบซึ้งในความผิดบาบอันมะหันของตົนเช่น: เรโรดผู้ข้าเด้กน้อยผู้บໍຣິสุดในหมู่บ้านเบัดเลเฮັม โดยหวังว่าจะได้ทำลายกะสัดแห่งอิดสะราเอน; นางเรโรเดยผู้ต่ำช้าต้องรับผิดชอบ ต่การตายของโยฮันผู้ให้บับติสมา; ปีลาดผู้อ่อนปวกปวก ແລะ มุ่งเอົาตัวลอดคົนดูอ; พวกทะหานที่เยาะเย้ย; พวกปะโรหิดกับผู้นำ ແລะ ฝูงชนผู้บ้าคั่งที่ร้องขึ้นว่า, "ให้โทดเลื่องความตายของลาอ ตกถึกพวกเรา ແລะ ลูกหูานของพวกเรา!" (มัดทาย 27:25); ต่างคົนต่างได้เห็นเถิงความผิดของตົน. พวกเขาพะยายามหูบซ่อนจากพຣะรัดสะฒี แห่งพຣะพักของพຣะคຣิสที่เจิดจ้ากว่าแสงอาทิด แต่ก็บ่เป็นปะโหยด. ในขะนะดูวกัน, บันดาผู้ที่ได้รับการชົงไถ่ ได้ถอดมົงกุดวางลົงที่พຣะบาดของพຣะผู้ช่วยให้ลอด พ้อมร้องขึ้นว่า: "พຣะอົงสิ้นพຣะชົนเพื่อข้าน้อย!" {GC 667.2}

ท่ามกางบันดาผู้ที่ได้รับการชົงไถ่ ก็มีพวกอัคคะสาวົกของพຣะคຣิส ຄືโปโลผู้หาญก้า, เปโตผู้กะตือลือลົ้น, โยฮันผู้ตอบสะหนองความรักของพຣะคຣิสด้วยความรัก ແລะ พี่น้องของคົนเหล่านี้ผู้จิงใจ, พ้อมด้วยคົนจำนวนหูวงหูายที่ยอมถึกข้าเพาะความเชื่อ; ส่วนพายนอกกำแพงนั้น, ท่ามกางสิ่งหน้ากูดหน้าชัวทั้งหูายก็คือคົนที่ภົดขี่, จับขัง ແລะ ข้าผู้ซอบทำให้ตาย. จักกะพัดเนโธผู้หุ่มโหด ແລะ เลอซามดั่งผีปีสาดร้ายก็อยู่ที่นั้น ແລะ ได้เห็นความสุกแสบยินดีของคົนทั้งหูายที่เพิ่นเถียจับทໍລะมาน, เชื่องใจของเพิ่นเป็นย่างมานซาตาน เพาะเถียเพิ่มเพิ่นในความเจ็บปวดของคົนเหล่านั้น. แม่ของเพิ่นก็อยู่ที่นั้น ແລะ ได้เห็นผົนการกะทำของตົนเอง ຄືอุปะนิไสชั่ว ແລะ การเอົาอาลົมเป็นใหย่ ที่นางได้ถ่ายทอดให้แก่ลูกชายผ่านอิดทิพົน ແລะ แบบย่างของนาง; สิ่งเหล่านี้ได้ออกผົนในอาดะยากำของจักกะพัดเนโธ ที่เธัดให้โลกสั่นสะท้าน. {GC 667.3}

ที่นั้นมีพวกบาดหูวง ແລะ พวกผู้นำในละบอบสันตะปาปา ที่เถียอ้างว่าตົนเป็นทูดของพຣะคຣิส แต่ได้ใช้เถื่องทໍລะมานกาย, คุกมืด ແລะ หูักปะหาน เพื่อควบคุมจิดสำนึกของไพ่พົนของพຣะอົງ. พวกสันตะปาปาผู้ทะนົงตัวก็อยู่ที่นั้น; คົนเหล่านี้เถียยົกตัวเองขึ้นเหนือพຣะเจ้า ແລะ บ่างอาดคิดที่จะปุ่นพຣะบันยัดของอົງผู้สูงสุด. คົนเหล่านี้เถียอ้างว่า ตົนเป็นดั่งบิดาของคຣิสตะจักร; เถิงแม่นว่า พวกเขายากจะหูีกล่วงกำตาม แต่จะต้องลายวานการ

ກະທຳຂອງຕົນຕໍ່ພຣະເຈົ້າຢ່າງແນ່ນອນ. ພວກເຂົາມາເຖິງຈຸດທີ່ຕ້ອງຍອມຮັບວ່າ ພຣະເຈົ້າຜູ້ຊົງຮູ້ແຈ້ງໃນທຸກສິ່ງ ຊົງຫວງແຫນພຣະບັນຍັດຂອງພຣະອົງ ແລະ ຈະບໍ່ລືມທີ່ຈະລົງໂທດຜູ້ກະທຳຜິດ ແຕ່ເປັນການຍອມຮັບທີ່ສວາຍເກີນໄປ. ພວກເຂົາຮຽນຮູ້ວ່າ ພຣະຄຣິສຊົງເອົາໃຈໃສ່ໃນຄວາມທຸກຍາກຂອງຄົນຂອງພຣະອົງ ຈຶ່ງຮູ້ສຶກເຖິງນ້ຳໜັກຂອງຖ້ອຍຄຳທີ່ພຣະອົງຊົງກ່າວວ່າ: “ເມື່ອພວກເຈົ້າໄດ້ເຮັດສິ່ງເຫຼົ່ານີ້ແກ່ຜູ້ທີ່ຕ່ຳຕ້ອຍທີ່ສຸດຄົນໜຶ່ງໃນພວກພີ່ນ້ອງເຫຼົ່ານີ້ຂອງເຮົາ ພວກເຈົ້າກໍໄດ້ເຮັດແກ່ເຮົາເໝືອນກັນ.” (ມັດທາຍ 25:40). {GC 668.1}

ໃນການພິພາກສາຂອງພຣະເຈົ້ານັ້ນ ຄົນອະທຳທັງປວງຖືກກ່າວຫາວ່າ ເປັນກະບົດຕໍ່ການປົກຄອງແຫ່ງສະຫວັນ. ບໍ່ມີທະນາຍຄວາມຄົນໃດມາສູ້ຄະດີໃຫ້ຄົນເຫຼົ່ານີ້, ພວກເຂົາບໍ່ມີຂໍ້ແກ້ຕົວ. ຄຳຕັດສິນຈຶ່ງຖືກປະກາດອອກໄປວ່າ ພວກເຂົາຈະຕ້ອງຖືກລົງໂທດໃຫ້ຕາຍໄປຕະຫຼອດນິຣັນດອນ. {GC 668.2}

ທຸກຄົນເຫັນຢ່າງຈະແຈ້ງວ່າ ຄ່າຈ້າງຂອງຄວາມບາບ ບໍ່ແມ່ນອິດສະຫຼະພາບທີ່ສະຫງ່າງາມ ແລະ ຊີວິດນິຣັນ ແຕ່ແມ່ນຄວາມເປັນທາດ, ຄວາມພິນາດ ແລະ ຄວາມຕາຍ. ຄົນອະທຳເຫັນສິ່ງທີ່ຕົນໄດ້ສູນເສຍ ເພື່ອແລກກັບຊີວິດແຫ່ງການເປັນກະບົດ. ເມື່ອມີການປະກາດເຖິງສະຫງ່າຣາສີແຫ່ງຊີວິດອັນຕະຫຼອດໄປເປັນນິດ ພວກເຂົາໄດ້ດູຖູກ; ແຕ່ບັດນີ້, ສະຫງ່າຣາສີນັ້ນ ເບິ່ງຄືເປັນສິ່ງທີ່ໜ້າປາຖະໜາຫຼາຍທີ່ສຸດ. ຄົນທີ່ກຳລັງພິນາດຈຶ່ງຮ້ອງວ່າ: “ເຮົາສາມາດໄດ້ສິ່ງທັງໝົດນີ້ ແຕ່ເຮົາເລືອກທີ່ຈະປະມັນຖິ້ມໄວ້ຫ່າງໆ. ໂອ ຄວາມຫຼົ່ງໄຫຼທີ່ແປກປະຫຼາດ! ເຮົາໄດ້ເອົາຄວາມຊົ່ມຊື່ນຍິນດີ, ສັນຕິສຸກ ແລະ ກຽດຕິຍົດສັກສີໄປແລກເອົາຄວາມທຸກ, ການເສຍຊື່ສຽງ ແລະ ຄວາມສິ້ນຫວັງ.” ທຸກຄົນເຫັນວ່າ ການທີ່ພວກເຂົາຖືກຫ້າມບໍ່ໃຫ້ເຂົ້າສະຫວັນນັ້ນເປັນການຍຸຕິທຳ ເພາະໂດຍທາງຊີວິດພວກເຂົາໄດ້ປະກາດວ່າ: “ພວກເຮົາບໍ່ຕ້ອງການຊາຍຄົນນີ້[1] ໃຫ້ເປັນຜູ້ປົກຄອງຂອງພວກເຮົາ.” (ລູກາ 19:14). {GC 668.3}

ການປະລາໄຊຂອງຊາຕານ

ຄົນອະທຳເບິ່ງພິທີສວມມົງກຸດໃຫ້ພຣະບຸດຂອງພຣະເຈົ້າເໝືອນຖືກສະກົດຈິດ. ພວກເຂົາເຫັນແຜ່ນພຣະບັນຍັດໃນພຣະຫັດຂອງພຣະອົງ ຄືກົດລະບຽບຕ່າງໆທີ່ພວກເຂົາເຄີຍດູຖູກ ແລະ ຝ່າຝືນນັ້ນ. ພວກເຂົາສຳຜັດໄດ້ເຖິງຄວາມອັດສະຈັນໃຈ ແລະ ຄວາມສຸກແສນຍິນດີ ທີ່ຫຼັ່ງໄຫຼອອກມາເປັນສຽງສັນລະເສີນຂອງຄົນທັງຫຼາຍທີ່ໄດ້ຮັບຄວາມລອດ; ໃນຂະນະທີ່ສຽງຮ້ອງດັງກ້ອງໄປເຖິງພວກທີ່ຢູ່ນອກນະຄອນນັ້ນ ທຸກຄົນຮ້ອງຂຶ້ນເປັນສຽງດຽວກັນວ່າ, “ຂ້າແດ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ຊົງຣິດທານຸພາບສູງສຸດ ພຣະຣາຊກິດຂອງພຣະອົງກໍໃຫຍ່ຫຼວງ ແລະ ໜ້າອັດສະຈັນ. ຂ້າແດ່ພຣະມະຫາກະສັດແຫ່ງປະຊາຊາດທັງປວງ ວິຖີທາງຂອງພຣະອົງກໍຍຸຕິທຳ ແລະ ທ່ຽງແທ້.” (ພຣະນິມິດ 15:3); ພວກເຂົາຈຶ່ງຂາບລົງນະມັດສະການອົງເຈົ້າຊີວິດ. {GC 668.4}

ຊາຕານເບິ່ງຄືເປັນອຳມະພາດໃນຂະນະທີ່ມັນເບິ່ງສະຫງ່າຣາສີ ແລະ ຄວາມຍິ່ງໃຫຍ່ຂອງພຣະຄຣິສ. ມັນຫວນລະນຶກເຖິງສະພາບທີ່ມັນເຄີຍຢູ່ກ່ອນທີ່ຈະລ່ວງຕົກລົງມາ; ມັນເຄີຍເປັນເຄຣຸບຜູ້ພິທັກ, ມັນຄືເສຣາຟິມຕົນໜຶ່ງ, ຄື “ດວງດາວສ່ອງໃສໃນຕອນເຊົ້າ” (ເອຊາຢາ 14:12), ແຕ່ບັດນີ້ມັນໄດ້ປ່ຽນໄປຫຼາຍ; ມັນໄດ້ເສື່ອມເສຍລົງແທ້! ມັນຖືກຕັດອອກຈາກສະພາທູດສະຫວັນທີ່ມັນເຄີຍໄດ້ຮັບກຽດນັ້ນໄປຕະຫຼອດການ. ບັດນີ້, ມັນເຫັນອີກຜູ້ໜຶ່ງຢືນຢູ່ໃກ້ພຣະບິດາ ເພື່ອບັງແສງຣັດສະໝີຂອງພຣະອົງ

[1] ໝາຍເຖິງພຣະເຢຊູ.

ໄວ້. ມັນເຫັນທູດສະຫວັນທີ່ສູງສະຫງ່າອົງໜຶ່ງ ເອົາມົງກຸດມາສວມໃຫ້ພຣະຄຣິສ ແລະ ສຳນຶກຂຶ້ນວ່າ ຕຳແໜ່ງຂອງທູດສະຫວັນອົງນັ້ນໜ້າຈະໄດ້ເປັນຂອງມັນ. {GC 669.1}

ຊາຕານລະນຶກເຖິງບ້ານເດີມໃນສະຫວັນ ຄາວເມື່ອມັນຍັງບໍຣິສຸດປາສະຈາກຄວາມບາບ ແລະ ຈົດຈຳສັນຕິສຸກກັບຄວາມສະດວກສະບາຍທີ່ມັນມີກ່ອນທີ່ມັນເລີ່ມຈົ່ມວ່າພຣະເຈົ້າ ແລະ ອິດສາ ພຣະຄຣິສ. ພາບໃນອະດີດປາກົດຢ່າງແຈ່ມແຈ້ງໃນຄວາມຊົງຈຳ ທັງການກ່າວຫາວ່າຮ້າຍ, ການກໍ່ ກະບົດ, ການຫຼອກລວງພວກທູດສະຫວັນເພື່ອຮຽກຮ້ອງຄວາມເຫັນໃຈ ແລະ ການສະໜັບສະໜູນ, ພ້ອມດ້ວຍຄວາມດື້ດ້ານຂອງຕົນທີ່ບໍ່ຍອມແກ້ໄຂຕົນເອງ ເມື່ອພຣະເຈົ້າພ້ອມທີ່ຈະໃຫ້ອະໄພ. ມັນທົບທວນ ວຽກງານທີ່ມັນເຮັດທ່າມກາງມະນຸດສະໂລກ ແລະ ຜົນງານຂອງມັນຄື ຄວາມກຽດຊັງທີ່ມະນຸດມີຕໍ່ ກັນ, ການທຳລາຍລ້າງຊີວິດຢ່າງເປັນຕາໜ້າຢ້ານກົວ, ການຂຶ້ນລົງຂອງອານາຈັກຕ່າງໆ, ການໂຄ່ນ ອຳນາດກະສັດ, ພ້ອມດ້ວຍຄວາມຂັດແຍ້ງ, ການປະຕິວັດ ແລະ ການຕໍ່ສູ້ທີ່ເກີດຂຶ້ນຢ່າງຕໍ່ເນື່ອງ ເປັນເວລາດົນນານ. ມັນລະນຶກເຖິງວ່າມັນເຄີຍພະຍາຍາມຢູ່ຕະຫຼອດເວລາ ເພື່ອຕໍ່ຕ້ານພັນທະກິດຂອງ ພຣະຄຣິສ ແລະ ເຮັດໃຫ້ມະນຸດຕົກຕ່ຳລົງເລື້ອຍໆ. ມັນເຫັນວ່າແຜນອຸບາຍຊົ່ວຂອງມັນບໍ່ມີອຳນາດ ທຳລາຍຜູ້ທີ່ວາງໃຈໃນພຣະເຢຊູ. ໃນຂະນະທີ່ຊາຕານເບິ່ງໄປຍັງອານາຈັກຂອງມັນ ຄືໝາກຜົນແຫ່ງ ວຽກງານຂອງມັນເອງ, ມັນເຫັນແຕ່ຫາຍະນະ ແລະ ຄວາມລົ້ມເຫຼວ. ມັນຫຼອກຄົນທັງຫຼາຍໃຫ້ຫຼົງເຊື່ອ ວ່າ ນະຄອນຂອງພຣະເຈົ້າເປັນເຫຍື່ອທີ່ສາມາດຊະນະໄດ້ງ່າຍ, ແຕ່ມັນຮູ້ວ່ານັ້ນບໍ່ແມ່ນຄວາມຈິງ. ຫຼາຍ ຕໍ່ຫຼາຍຄັ້ງ ໃນຂະບວນການຕໍ່ສູ້ມະຫາການນີ້ມັນຕ້ອງປະລາໄຊຈົນຕ້ອງຈຳໃຈຍອມແພ້. ມັນຮູ້ດີວ່າ ພຣະເຈົ້າອົງນິຣັນມີອຳນາດຣິດເດດ ແລະ ສະຫງ່າຣາສີຫຼາຍສ່ຳໃດ. {GC 669.2}

ຈຸດປະສົງຂອງຈອມກະບົດ ແມ່ນການແກ້ຕົວ ແລະ ການພິສູດວ່າການປົກຄອງຂອງພຣະເຈົ້າເປັນ ຕົ້ນເຫດຂອງການກະບົດ. ມັນໄດ້ທຸ້ມເທສະຕິປັນຍາອັນປາດເປື່ອງທັງໝົດຂອງມັນເພື່ອຈຸດປະສົງນີ້. ມັນ ເຮັດວຽກເປັນລະບົບຢ່າງເປັນແບບແຜນ ຈົນປະສົບຄວາມສຳເລັດຢ່າງໜ້າອັດສະຈັນ ເຮັດໃຫ້ຄົນຈຳນວນ ມະຫາສານຍອມຮັບເອົາມຸມມອງຂອງມັນ ກ່ຽວກັບການຕໍ່ສູ້ອັນຍິ່ງໃຫຍ່ທີ່ດຳເນີນມາຢ່າງຍາວນານ. ມັນ ຢູ່ເບື້ອງຫຼັງການກະບົດ ແລະ ໄດ້ຫຼອກລວງຄົນໃຫ້ເຊື່ອວ່າຄວາມເທັດເປັນຄວາມຈິງເປັນເວລາຫຼາຍ ພັນປີ. ແຕ່ບັດນີ້, ເຖິງເວລາແລ້ວທີ່ການກະບົດຈະຕ້ອງພ່າຍແພ້ຢ່າງສິ້ນເຊີງ, ເຖິງເວລາທີ່ຈະຕ້ອງ ເປີດໂປງປະຫວັດ ແລະ ອຸປະນິໄສຂອງຊາຕານ. ໃນຄວາມພະຍາຍາມຄັ້ງສຸດທ້າຍທີ່ຈະໂຄ່ນອຳນາດ ຂອງພຣະຄຣິສ, ທຳລາຍໄພ່ພົນຂອງພຣະອົງ ແລະ ຍຶດເອົານະຄອນຂອງພຣະເຈົ້າ ຈອມຫຼອກລວງ ໄດ້ຖືກເປີດໂປງຢ່າງໝົດເປືອກ. ຜູ້ທີ່ເຂົ້າຮ່ວມກັບມັນກໍເຫັນວ່າ ຄວາມມຸ່ງໝາຍຂອງມັນລົ້ມເຫຼວຢ່າງ ຮາບຄາບ. ຜູ້ຕິດຕາມພຣະຄຣິສ ພ້ອມດ້ວຍທູດສະຫວັນທີ່ຈົງຮັກພັກດີ ເຫັນແຜນອຸບາຍທັງໝົດຂອງ ຊາຕານທີ່ມັນໃຊ້ໃນການຕໍ່ສູ້ກັບການປົກຄອງຂອງພຣະເຈົ້າ. ຊີວິດທັງຫຼາຍທົ່ວຈັກກະວານ ຈຶ່ງພາກັນ ກຽດຊັງຊາຕານ. {GC 670.1}

ຊາຕານຮູ້ວ່າການຈົ່ງໃຈກະບົດເຮັດໃຫ້ມັນບໍ່ເໝາະສົມສຳລັບສະຫວັນ. ມັນໄດ້ຝຶກຝົນຕົວເອງເພື່ອ ຕໍ່ສູ້ກັບພຣະເຈົ້າຈົນຄວາມບໍຣິສຸດ, ສັນຕິສຸກ ແລະ ຄວາມເປັນນ້ຳໜຶ່ງໃຈດຽວກັນໃນສະຫວັນ ຈະ ເປັນເລື່ອງທີ່ທໍລະມານໃຈທີ່ສຸດສຳລັບມັນ. ບັດນີ້, ຂໍ້ກ່າວຫາຂອງມັນເລື່ອງພຣະເມດຕາ ແລະ ຄວາມ ຍຸຕິທຳຂອງພຣະເຈົ້າກໍຍຸຕິລົງເສຍແລ້ວ. ຂໍ້ຕຳໜິທັງໝົດທີ່ມັນເຄີຍພະຍາຍາມໃສ່ຮ້າຍພຣະເຢໂຮວາກໍ ກັບຖືກຕົວມັນເອງ. ບັດນີ້, ຊາຕານກົ້ມລົງຂາບໄຫວ້ ແລະ ສາລະພາບວ່າຄຳຕັດສິນລົງໂທດມັນນັ້ນ ຍຸຕິທຳແລ້ວ. {GC 670.2}

“ໃຜໜໍຈະບໍ່ຢຳເກງພຣະອົງ ແລະ ຈະບໍ່ຖວາຍກຽດແດ່ພຣະນາມຂອງພຣະອົງ ເພາະພຣະອົງຜູ້ດຽວ

ຊົງເປັນຜູ້ບໍຣິສຸດ. ປະຊາຊາດທັງປວງຈະມານະມັດສະການຕໍ່ພຣະພັກພຣະອົງ ເພາະກິດຈະການ ອັນຍຸຕິທຳຂອງພຣະອົງກໍປາກົດແຈ້ງແລ້ວ.” (ພຣະນິມິດ 15:4). ທຸກຄຳຖາມທີ່ກ່ຽວຂ້ອງກັບຄວາມ ຈິງ ແລະ ຄວາມເທັດໃນການຕໍ່ສູ້ອັນຍາວນານນັ້ນ ບັດນີ້ໄດ້ຮັບການຊີ້ແຈງໃຫ້ກະຈ່າງແຈ້ງ. ຜົນ ຂອງການກະບົດ ແລະ ຜົນຂອງການປະຕິເສດພຣະບັນຍັດຂອງພຣະເຈົ້າ ລ້ວນແຕ່ໄດ້ຮັບການ ເປີດເຜີຍຕໍ່ບັນດາຜູ້ມີຊີວິດທັງຫຼາຍທີ່ພຣະອົງຊົງສ້າງ. ຜົນການປົກຄອງຂອງຊາຕານ ໄດ້ຖືກນຳມາ ປຽບທຽບກັບການປົກຄອງຂອງພຣະເຈົ້າໃຫ້ທຸກຄົນໃນຈັກກະວານໄດ້ເຫັນ. ການກະທຳຂອງຊາຕານ ເປັນສິ່ງທີ່ກ່າວໂທດມັນເອງ. ສະຕິປັນຍາ, ຄວາມຍຸຕິທຳ, ແລະ ພຣະຄຸນຄວາມດີຂອງພຣະເຈົ້າ ໄດ້ ຮັບການພິສູດວ່າຖືກຕ້ອງແລ້ວ. ທຸກຄົນເຫັນວ່າການກະທຳທຸກຢ່າງຂອງພຣະເຈົ້າຕະຫຼອດການຕໍ່ສູ້ ມະຫາການນັ້ນ ລ້ວນແຕ່ເຮັດເພື່ອໃຫ້ຜົນດີແກ່ຄົນຂອງພຣະອົງຕະຫຼອດຊົ່ວນິຣັນ ແລະ ອຳນວຍ ປະໂຫຍດແກ່ບັນດາໂລກຕ່າງໆ ທີ່ພຣະອົງຊົງສ້າງ. “ຂ້າແດ່ອົງພຣະຜູ້ເປັນເຈົ້າ ທຸກສິ່ງທີ່ຖືກສ້າງມາ ຈະຍ້ອງຍໍສັນລະເສີນພຣະອົງ ແລະ ປະຊາຊົນຂອງພຣະອົງຈະໂມທະນາຂອບພຣະຄຸນແດ່ພຣະອົງ.” (ເພງສັນລະເສີນ 145:10 LO2012). ປະຫວັດສາດແຫ່ງຄວາມບາບຈະເປັນພະຍານຢູ່ຕະຫຼອດຊົ່ວ ນິຣັນວ່າ ຄວາມສຸກຂອງບັນດາຜູ້ມີຊີວິດທີ່ພຣະເຈົ້າຊົງສ້າງນັ້ນ ຂຶ້ນຢູ່ກັບກົດບັນຍັດທັງຫຼາຍຂອງ ພຣະອົງ. ເມື່ອຂໍ້ເທັດຈິງທັງຫຼາຍທີ່ກ່ຽວຂ້ອງກັບການຕໍ່ສູ້ມະຫາການໄດ້ປາກົດແຈ້ງແລ້ວ ຜູ້ມີຊີວິດ ທັງຫຼາຍໃນຈັກກະວານທັງຜູ້ທີ່ຈົງຮັກພັກດີ ແລະ ຜູ້ທີ່ຮ່ວມໃນການກະບົດກໍຈະຮ້ອງຂຶ້ນພ້ອມກັນ ວ່າ: “ຂ້າແດ່ພຣະມະຫາກະສັດແຫ່ງປະຊາຊາດທັງປວງ ວິຖີທາງຂອງພຣະອົງກໍຍຸຕິທຳ ແລະ ທ່ຽງ ແທ້.” *{GC 670.3}*

ບັນດາຊີວິດທົ່ວຈັກກະວານ ໄດ້ເຫັນການເສຍສະຫຼະອັນໃຫຍ່ຫຼວງທີ່ພຣະບິດາ ແລະ ພຣະບຸດ ຊົງກະທຳເພື່ອມະນຸດສະໂລກ; ສິ່ງເຫຼົ່ານີ້ໄດ້ປາກົດຢ່າງຈະແຈ້ງແລ້ວ. ບັດນີ້, ເຖິງເວລາທີ່ພຣະຄຣິສ ຈະໄດ້ຮັບຕຳແໜ່ງອັນຊອບທຳຂອງພຣະອົງເໜືອທູດສະຫວັນທັງຫຼາຍ, ເໜືອຜູ້ມີອຳນາດຣິດເດດທັງສິ້ນ ແລະ ເໜືອນາມຊື່ທັງປວງ. ພຣະອົງຊົງອົດທົນຕໍ່ໄມ້ກາງແຂນ ແລະ ຊົງຖືວ່າຄວາມອັບອາຍນັ້ນບໍ່ ເປັນສິ່ງສຳຄັນ ເພື່ອຄວາມສຸກແສນຍິນດີທີ່ຕັ້ງໄວ້ຕໍ່ໜ້າພຣະອົງ ຄືການນຳພາລູກຂອງພຣະອົງຫຼາຍ ຄົນມາສູ່ສະຫວ່າຣາສີ. ເຖິງແມ່ນວ່າຄວາມໂສກເສົ້າ ແລະ ຄວາມອັບອາຍນັ້ນໃຫຍ່ຫຼວງເກີນທີ່ຈະ ຈິນຕະນາການໄດ້ ແຕ່ຄວາມຊື່ນຊົມຍິນດີ ແລະ ສະຫວ່າຣາສີທີ່ໄດ້ຮັບກໍຍິ່ງໃຫຍ່ກວ່າ. ພຣະອົງຊົງ ເບິ່ງໄປຍັງຄົນທັງຫຼາຍທີ່ພຣະອົງຊົງໄຖ່ ແລະ ເຫັນຜູ້ຄົນທີ່ໄດ້ຮັບການປ່ຽນແປງຕາມພຣະລັກສະນະ ຂອງພຣະອົງ; ຈິດໃຈທຸກຄົນສະທ້ອນເຖິງພຣະລັກສະນະຂອງພຣະເຈົ້າຢ່າງສົມບູນ, ໃບໜ້າທຸກຄົນ ສະທ້ອນເຖິງພຣະລັກສະນະຂອງອົງເຈົ້າຊີວິດຂອງພວກເຂົາ. ພຣະເຢຊູພໍພຣະໄທເມື່ອເຫັນຜົນແຫ່ງ ຄວາມທຸກຍາກຂອງພຣະອົງ. ແລ້ວພຣະອົງຊົງກ່າວດ້ວຍສຽງອັນດັງ ຈົນທັງຄົນຊອບທຳ ແລະ ຄົນ ອະທຳໄດ້ຍິນທົ່ວໜ້າກັນວ່າ: “ເບິ່ງແມ! ຜູ້ທີ່ໄດ້ຮັບການໄຖ່ດ້ວຍໂລຫິດຂອງເຮົາ. ເຮົາໄດ້ທົນທຸກຈົນ ຕາຍ ເພື່ອຄົນເຫຼົ່ານີ້ຈະໄດ້ຢູ່ກັບເຮົາຕະຫຼອດໄປເປັນນິດນິຣັນດອນ.” ຈາກນັ້ນຄົນທັງຫຼາຍທີ່ນຸ່ງເສື້ອຂາວ ຮອບບັນລັງ ກໍຮ່ວມກັນຮ້ອງເພງສັນລະເສີນຂຶ້ນວ່າ: “ພຣະເມສານ້ອຍທີ່ຖືກຂ້າແລ້ວນັ້ນ ເປັນຜູ້ສົມຄວນ ທີ່ຈະໄດ້ຮັບຣິດອຳນາດ, ຊັບສົມບັດ, ສະຕິປັນຍາ, ພະລັງອຳນາດ, ກຽດຕິຍົດ, ສະຫວ່າຣາສີ ແລະ ຄຳ ສັນລະເສີນ.” (ພຣະນິມິດ 5:12). *{GC 671.1}*

ຄວາມພິນາດອັນຮຸນແຮງຂອງຄົນອະທຳ

ເຖິງແມ່ນວ່າ ຊາຕານຈຳເປັນຕ້ອງຍອມຮັບວ່າພຣະເຈົ້າຊົງຍຸຕິທຳ ແລະ ໄດ້ກົ້ມຫົວຂາບລົງ ຍອມຮັບວ່າພຣະຄຣິສຊົງເປັນຜູ້ສູງສຸດ ແຕ່ອຸປະນິໄສຂອງມັນບໍ່ໄດ້ປ່ຽນແປງ. ຄວາມດື້ດ້ານກໍລະເບີດຂຶ້ນ

ເໝືອນເຂື່ອນແຕກ. ມັນໂມໂຫບ້າຄັ່ງ ແລະ ຕັ້ງໃຈວ່າຈະບໍ່ຍອມແພ້ສົງຄາມ; ໄດ້ເວລາທີ່ຈະຕໍ່ສູ້ເຈົ້າ ສະຫວັນຢ່າງດຸເດືອດເປັນຄັ້ງສຸດທ້າຍ. ມັນເຂົ້າໄປທ່າມກາງພວກຂອງມັນຢ່າງຮີບດ່ວນ ພະຍາຍາມ ປຸກປັ່ນພວກເຂົາໃຫ້ມີຄວາມໂກດແຄ້ນເຊັ່ນດຽວກັບຕົນ ແລະ ໃຫ້ລຸກຂຶ້ນຕໍ່ສູ້ທັນທີ. ແຕ່ທ່າມກາງ ຄົນຈຳນວນຫຼວງຫຼາຍອັນນັບບໍ່ຖ້ວນທີ່ມັນເຄີຍຫຼອກໃຫ້ກະບົດກັບມັນ ບໍ່ມີໃຜຍອມຮັບມັນ. ອຳນາດ ຂອງມັນໄດ້ຈົບສິ້ນເສຍແລ້ວ. ຄົນອະທຳກຽດຊັງພຣະເຈົ້າເຊັ່ນດຽວກັບຊາຕານ ແຕ່ພວກເຂົາເຫັນວ່າ ບໍ່ມີຄວາມຫວັງແລ້ວ, ພວກເຂົາບໍ່ສາມາດສູ້ຊະນະພຣະເຢໂຮວາໄດ້. ບັດນີ້, ຄວາມຄຽດແຄ້ນຂອງ ພວກເຂົາເດືອດຂຶ້ນໃສ່ຊາຕານ ແລະ ຜູ້ທີ່ຊາຕານເຄີຍໃຊ້ໃນການຫຼອກລວງ; ພວກເຂົາຈຶ່ງຫັນໄປຕໍ່ສູ້ ກັບມັນດ້ວຍຄວາມຮ້າຍກາດດັ່ງຜີສາດ ແລະ ພຸ່ງໃສ່ຜູ້ຮັບໃຊ້ຂອງມັນດ້ວຍຄວາມຄຽດແຄ້ນອັນເຫຼືອ ປະມານ. *{GC 671.2}*

ພຣະເຈົ້າຊົງກ່າວວ່າ: “ເພາະເຈົ້າຄິດວ່າເຈົ້າສະຫຼາດ ແລະ ເທົ່າທຽມກັບພຣະເຈົ້າ, ເຮົາກຳລັງ ນຳບັນດາຊາວຕ່າງຊາດມາໂຈມຕີເຈົ້າ. ພວກເຂົາໂຫດຮ້າຍທີ່ສຸດໃນບັນດາປະຊາຊາດ ແລະ ຈະຊັກ ດາບຂອງຕົນສູ້ກັບຄວາມງາມແຫ່ງສະຕິປັນຍາຂອງເຈົ້າ ແລະ ຈະເຮັດໃຫ້ຄວາມຮຸ່ງເຮືອງຂອງເຈົ້າເປັນ ມົນທິນ. ພວກເຂົາຈະໂຍນເຈົ້າລົງໃນຫຼຸມແຫ່ງແດນຄົນຕາຍ.” “ໂອເຄຣຸບຜູ້ພິທັກເອີຍ...ເຮົາຈະກຳຈັດເຈົ້າ ອອກຈາກທ່າມກາງສິລາໄຟ...ເຮົາຈະຫວ່ຽງເຈົ້າລົງເຖິງດິນ, ເຮົາຈະຕີແຜ່ເຈົ້າຕໍ່ໜ້າກະສັດທັງຫຼາຍ ເພື່ອ ຕາຂອງຄົນເຫຼົ່ານັ້ນຈະໄດ້ເຫັນເຈົ້າ ... ເຮົາຈະເຮັດໃຫ້ເຈົ້າເປັນເທົ່າຖ່ານເທິງແຜ່ນດິນໂລກ ທ່າມກາງ ສາຍຕາຂອງຄົນທັງປວງທີ່ເບິ່ງເຈົ້າຢູ່ ... ເຈົ້າຈະສິ້ນສູນລົງຢ່າງໜ້າຢ້ານ ແລະ ຈະບໍ່ດຳລົງຢູ່ອີກຕໍ່ໄປ ເປັນນິດ.” (ເອເຊກຽນ 28:6–8 NTV, 16–19 ດັດແປງຈາກສະບັບ KJV/TKJV). *{GC 672.1}*

“ເກີບທຸກຄູ່ ທັງເສື້ອທີ່ເປິເປື້ອນດ້ວຍເລືອດທຸກໂຕຂອງສັດຕູທີ່ຮຸກຮານ ຈະຖືກເຜົາໄຟທັງສິ້ນ.” “ອົງພຣະຜູ້ເປັນເຈົ້າໂກດຮ້າຍຊົນຊາດທັງໝົດ ແລະ ກອງທັບທັງຫຼາຍຂອງພວກເຂົາ. ພຣະອົງລົງໂທດ ພວກເຂົາໃຫ້ໄປສູ່ຄວາມຈິບຫາຍ.” “ພຣະອົງສົ່ງຖ່ານໄຟ ແລະ ມາດທີ່ລຸກໄໝ້ຢູ່ ລົງມາສູ່ຄົນຊົ່ວຮ້າຍ ທັງຫຼາຍ ພຣະອົງໄດ້ລົງໂທດພວກເຂົາໂດຍສົ່ງລົມຮ້ອນມາເຜົາໄໝ້.” (ເອຊາຢາ 9:5; 34:2 LO2012; ເພງສັນລະເສີນ 11:6). ພຣະເຈົ້າສົ່ງໄຟຕົກລົງມາຈາກຟ້າສະຫວັນ, ພື້ນແຜ່ນດິນໂລກກໍແຕກເປັນ ປ່ຽງໆ. ເຄື່ອງອາວຸດທີ່ເຊື່ອງໄວ້ໃຕ້ພື້ນພິພົບກໍພຸ່ງຂຶ້ນ, ມີແປວໄຟພຸ່ງອອກຈາກປາກເຫວທຸກແຫ່ງ, ຈົນ ແມ່ນແຕ່ກ້ອນຫີນກໍລຸກເປັນໄຟ. ວັນນັ້ນຈະເປັນດັ່ງເຕົາໄຟທີ່ເຜົາຜານ, ໂລກະທາດຈະສະຫຼາຍໄປດ້ວຍ ໄຟ ແລະ ບັນດາຜົນງານຂອງມະນຸດຈະວອດວາຍໃນກອງໄຟ. (ເບິ່ງ ມາລາກີ 4:1; 2 ເປໂຕ 3:10). ພື້ນແຜ່ນດິນໂລກເໝືອນດັ່ງທະເລໄຟທີ່ມີຄື້ນລາວາຊັດໄປມາ, ເປັນວັນພິພາກສາລົງໂທດຄົນອະທຳໃຫ້ ພິນາດ. “ມາເຖິງຕອນນີ້ ແມ່ນເວລາທີ່ອົງພຣະຜູ້ເປັນເຈົ້າຈະຊ່ວຍກູ້ເອົາພູເຂົາຊີໂອນ ແລະ ເອົາຊະນະ ເຫຼົ່າສັດຕູຂອງພູເຂົາຊີໂອນໃຫ້ໝົດສິ້ນ.” (ເອຊາຢາ 34:8 LO2012). *{GC 672.2}*

ຄົນອະທຳໄດ້ຮັບການຕອບແທນໃນແຜ່ນດິນໂລກ. (ເບິ່ງ ສຸພາສິດ 11:31). ອົງພຣະຜູ້ເປັນເຈົ້າອົງ ຊົງຣິດອຳນາດຍິ່ງໃຫຍ່ກ່າວວ່າ, “ຄົນຈອງຫອງ ແລະ ຄົນຊົ່ວທຸກຄົນຈະຖືກໄຟເຜົາດັ່ງເຟືອງ. ໃນວັນ ນັ້ນ ພວກເຂົາຈະຖືກໄຟເຜົາ ແລະ ຈະບໍ່ມີຫຍັງເຫຼືອຢູ່ເລີຍ.” (ມາລາກີ 4:1). ບາງຄົນຖືກທຳລາຍ ທັນທີ, ສ່ວນຄົນອື່ນຕ້ອງທົນຄວາມເຈັບປວດທໍລະມານຢູ່ຫຼາຍມື້. ທຸກຄົນຮັບໂທດ “ຕາມການກະທຳ ຂອງຕົນ.” ສ່ວນຄວາມບາບຂອງຄົນຊອບທຳນັ້ນ ໄດ້ໂອນຖ່າຍໃຫ້ຊາຕານແລ້ວ ແລະ ມັນຕ້ອງທົນ ທຸກທໍລະມານບໍ່ພຽງແຕ່ຍ້ອນການກະບົດຂອງມັນເອງ ແຕ່ຍ້ອນຄວາມບາບທີ່ມັນໄດ້ທົດລອງຄົນຂອງ ພຣະເຈົ້າໃຫ້ກະທຳດ້ວຍ. ໂທດຂອງມັນຈະໜັກກວ່າບັນດາຄົນທີ່ມັນຫຼອກລວງຢ່າງຫຼວງຫຼາຍ. ຫຼັງຈາກ ທຸກຄົນທີ່ພິນາດຍ້ອນການລໍ້ລວງຂອງຊາຕານຖືກເຜົາໄໝ້ໃຫ້ໝົດສິ້ນ, ຊາຕານເອງກໍຍັງຕ້ອງຢູ່ຢ່າງ

ເຈັບປວດຕໍ່ໄປ. ແຕ່ໃນທີ່ສຸດ, ໄຟທີ່ຊຳລະນັ້ນຈະເຜົາຄົນອະທຳຢ່າງໝົດສິ້ນທັງຮາກທັງກິ່ງ, ຊາຕານ ເປັນດັ່ງຮາກແກ້ວ ແລະ ຜູ້ທີ່ຕິດຕາມມັນກໍຄືກິ່ງ. ເຖິງຄາວນັ້ນ, ທຸກຄົນໄດ້ຮັບໂທດຕາມກົດບັນຍັດ ຢ່າງເຕັມອັດຕາ ແລະ ຕາມຄວາມຍຸຕິທຳທຸກປະການ; ຟ້າສະຫວັນ ແລະ ແຜ່ນດິນໂລກເບິ່ງແລ້ວ ປະກາດວ່າ ພຣະເຢໂຮວາຊົງຊອບທຳ. *{GC 673.1}*

ວຽກງານທຳລາຍຂອງຊາຕານໄດ້ຈົບສິ້ນໄປຕະຫຼອດການ. ເປັນເວລາ 6,000 ປີ ທີ່ມັນເຮັດຕາມໃຈມັນ ເອງຈົນໂລກເຕັມໄປດ້ວຍຄວາມທຸກໂສກ ແລະ ທົ່ວຈັກກະວານເຕັມໄປດ້ວຍຄວາມໂສກເສົ້າ. ທຳມະຊາດ ທັງປວງຄວນຄາງດ້ວຍຄວາມເຈັບປວດມາຢ່າງດົນນານ. ບັດນີ້, ທຸກຊີວິດທີ່ພຣະເຈົ້າຊົງສ້າງ ລ້ວນ ແຕ່ໄດ້ພົ້ນຈາກຊາຕານ ແລະ ຈະບໍ່ໄດ້ຖືກມັນລໍ້ລວງອີກຕໍ່ໄປເປັນນິດ. “ທົ່ວທັງໂລກມີສິດໄດ້ພັກຜ່ອນ ແລະ ໄດ້ຢູ່ຢ່າງສະຫງົບສຸກ ແລະ ທຸກຄົນຕ່າງກໍຮ້ອງເພງດ້ວຍຄວາມຊົມຊື່ນຍິນດີ.” (ເອຊາຢາ 14:7). ມີສຽງໂຮ່ຮ້ອງສະຫຼອງໄຊ ແລະ ການສັນລະເສີນດັງຂຶ້ນຈາກຜູ້ຈົງຮັກພັກດີຕໍ່ພຣະເຈົ້າທົ່ວ ຈັກກະວານ. “ຫຼັງຈາກນັ້ນ ຂ້າພະເຈົ້າໄດ້ຍິນສຽງເໝືອນສຽງຄົນຈຳນວນຫຼວງຫຼາຍ, ເໝືອນສຽງນ້ຳ ໄຫຼແຮງ ແລະ ເໝືອນສຽງຟ້າຮ້ອງ, ຮ້ອງວ່າ: ‘ຮາເລລູຢາ! ເພາະອົງພຣະຜູ້ເປັນເຈົ້າພຣະເຈົ້າຜູ້ມີ ຣິດອຳນາດຍິ່ງໃຫຍ່ນັ້ນປົກຄອງຢູ່.’” (ພຣະນິມິດ 19:6 LCV). *{GC 673.2}*

ໃນຂະນະທີ່ໂລກຖືກຫໍ່ຫຸ້ມດ້ວຍໄຟທີ່ທຳລາຍລ້າງນັ້ນ ຄົນຊອບທຳຢູ່ຢ່າງປອດໄພໃນນະຄອນບໍຣິສຸດ. ຄົນເຫຼົ່ານີ້ໄດ້ເປັນຂຶ້ນມາໃນການຟື້ນຄືນຊີວິດຄັ້ງທຳອິດ, ຄວາມຕາຍຄັ້ງທີສອງຈຶ່ງບໍ່ມີອຳນາດເໜືອ ພວກເຂົາ. ເຖິງແມ່ນວ່າ ພຣະເຈົ້າຊົງເປັນໄຟທີ່ເຜົາຜານສຳລັບຄົນອະທຳ ແຕ່ພຣະອົງເປັນດັ່ງດວງ ອາທິດ ແລະ ເປັນກຳບັງໃຫ້ແກ່ຄົນຂອງພຣະອົງ. (ເບິ່ງ ພຣະນິມິດ 20:6; ເພງສັນລະເສີນ 84:11). *{GC 673.3}*

ທີ່ພຳນັກຖາວອນ

“ຂ້າພະເຈົ້າໄດ້ເຫັນທ້ອງຟ້າໃໝ່ ແລະ ແຜ່ນດິນໂລກໃໝ່ ເພາະວ່າທ້ອງຟ້າເດີມ ແລະ ແຜ່ນດິນໂລກ ເດີມນັ້ນ ໄດ້ລ່ວງໄປແລ້ວ.” (ພຣະນິມິດ 21:1 LO1972). ໄຟທີ່ເຜົາຜານຄົນອະທຳ ຈະຊຳລະໂລກ ໃຫ້ປາສະຈາກມົນທິນ. ບໍ່ເຫຼືອຮ່ອງຮອຍຂອງການຖືກສາບແຊ່ງເລີຍ, ບໍ່ມີຊຸມນະຣົກຮ້າຍທີ່ເຜົາຢູ່ ຕະຫຼອດນິຣັນ ເພື່ອເຕືອນສະຕິຄົນທີ່ໄດ້ຮັບການຊົງໄຖ່ໃຫ້ເຫັນເຖິງຜົນອັນເປັນຕາຢ້ານຂອງຄວາມ ບາບ. *{GC 674.1}*

ມີສິ່ງດຽວທີ່ເຕືອນຄວາມຊົງຈຳ ນັ້ນຄືຮ່ອງຮອຍຈາກການສິ້ນພຣະຊົນເທິງໄມ້ກາງແຂນທີ່ປາກົດຢູ່ ໃນພຣະກາຍຂອງພຣະຜູ້ໄຖ່ຂອງພວກເຮົາ ທີ່ຈະບໍ່ເລືອນລາງຈາງຫາຍຕະຫຼອດໄປ. ມີຮ່ອງຮອຍອັນ ໂຫດຮ້າຍຈາກຄວາມບາບຂອງພວກເຮົາຢູ່ທີ່ພຣະສຸມ, ສີຂ້າງ, ພຣະຫັດ ແລະ ພຣະບາດຂອງ ພຣະອົງ. ມີຜູ້ເຜີຍພຣະທຳກ່າວເຖິງສະຫງ່າຣາສີຂອງພຣະຄຣິສວ່າ: “ແສງສຸກໃສແມບມາບສ່ອງມາ ຈາກມືຂອງພຣະອົງ ບ່ອນທີ່ຣິດອຳນາດໄດ້ເຊື່ອງຊ່ອນໄວ້ທີ່ນັ້ນ.” (ຮາບາກຸກ 3:4). ພຣະຄຳພີບາງ ສະບັບເພີ່ມໝາຍເຫດວ່າ ແສງສຸກໃສດັ່ງກ່າວໄດ້ສ່ອງອອກມາຈາກສີຂ້າງຂອງພຣະອົງ ຄືບ່ອນທີ່ຖືກ ແທງໃຫ້ເລືອດໄຫຼອອກ ເມື່ອພຣະອົງຊົງໄຖ່ມະນຸດໃຫ້ກັບຄືນດີກັບພຣະເຈົ້າ, ນັ້ນຄືສະຫງ່າຣາສີຂອງ ພຣະຜູ້ຊ່ວຍໃຫ້ລອດ ເປັນ “ບ່ອນທີ່ຣິດອຳນາດໄດ້ເຊື່ອງຊ່ອນໄວ້ທີ່ນັ້ນ.” ພຣະອົງຊົງຣິດຍິ່ງໃຫຍ່ໃນ ການໄຖ່ມະນຸດໃຫ້ລອດພົ້ນດ້ວຍການເສຍສະຫຼະພຣະອົງເອງ; ສະນັ້ນ, ພຣະອົງຈຶ່ງຊົງຣິດເຂັ້ມແຂງ ໃນການລົງໂທດຕາມຄວາມຍຸຕິທຳຕໍ່ທຸກຄົນທີ່ດູໝິ່ນພຣະເມດຕາຂອງພຣະເຈົ້າ. ສັນຍະລັກແຫ່ງການ ຖ່ອມພຣະອົງລົງນັ້ນ ຄືກຽດຕິສັກທີ່ສູງສຸດຂອງພຣະອົງ. ຄົນທັ້ງຫຼາຍຈະປະກາດເຖິງຣິດອຳນາດຂອງ

ພຣະຄຣິສ ແລະ ຈະສັນລະເສີນພຣະອົງຕະຫຼອດນິດນິຣັນດອນ ຍ້ອນແປ້ວຈາກໄມ້ກາງແຂນແຫ່ງ ຄານວາຣີ. {GC 674.2}

“ນະຄອນເຢຣູຊາເລັມເອີຍ ເຈົ້າເປັນບ່ອນທີ່ພຣະເຈົ້າເຝົ້າເບິ່ງປະຊາຊົນຂອງພຣະອົງ ເໝືອນດັ່ງຄົນລ້ຽງແກະຜູ້ໜຶ່ງ ທີ່ເຝົ້າເບິ່ງຝູງແກະຂອງຕົນຢູ່ເທິງຫໍຄອຍ; ເຈົ້າຈະເປັນເມືອງເອກແຫ່ງຣາຊອານາຈັກອີກ ເທື່ອໜຶ່ງ ທີ່ເຈົ້າໄດ້ເຄີຍເປັນມາແລ້ວ.” (ມີກາ 4:8). ເວລາມາເຖິງແລ້ວ ທີ່ຄົນບໍຣິສຸດໃນສະໄໝຕ່າງ ໆ ໄດ້ລໍຄອຍດ້ວຍໃຈປາຖະໜາມາຕັ້ງແຕ່ທູດສະຫວັນຖືດາບເພີງ ເພື່ອຫ້າມມະນຸດຄູ່ທຳອິດບໍ່ໃຫ້ກັບເຂົ້າ ໄປໃນສວນເອເດນ, ຄືເວລາທີ່ຈະໄດ້ຮັບກຳມະສິດທີ່ຊົງໄຖ່ໄວ້. (ເບິ່ງ ເອເຟໂຊ 1:14). ໃນຄາວຕົ້ນ ເດີມນັ້ນ, ພຣະເຈົ້າຊົງມອບແຜ່ນດິນໂລກໃຫ້ມະນຸດຄອບຄອງ ແຕ່ມະນຸດໄດ້ທໍລະຍົດຕໍ່ພຣະອົງ; ໂລກ ຈຶ່ງຕົກຢູ່ໃນມືຂອງມານຊາຕານເປັນເວລາດົນນານ. ຢ່າງໃດກໍຕາມ, ດ້ວຍແຜນການຊົງໄຖ່ອັນຍິ່ງໃຫຍ່ ນັ້ນ ໂລກໄດ້ຮັບການໄຖ່ກັບຄືນມາ ພ້ອມດ້ວຍທຸກສິ່ງທີ່ສູນເສຍໄປຍ້ອນຄວາມບາບ. ພຣະເຈົ້າ “ໄດ້ຈັດ ຮູບຮ່າງສ້າງແຜ່ນດິນໂລກຂຶ້ນມາ ໄດ້ເຮັດໃຫ້ໂລກໝັ້ນຄົງ ແລະ ຢັ້ງຢືນຄົງຢູ່ໄດ້. ພຣະອົງບໍ່ໄດ້ເຮັດໃຫ້ ເປັນທີ່ເປົ່າຮ້າງຫວ່າງຄົນ ແຕ່ເປັນບ່ອນທີ່ມະນຸດເຮົາພັກພາອາໄສຢູ່.” (ເອຊາຢາ 45:18). ພຣະປະສົງ ທຳອິດໃນການສ້າງໂລກຈະໄດ້ສຳເລັດ ໂດຍໂລກຈະກາຍເປັນທີ່ອາໄສຂອງຄົນທັງຫຼາຍທີ່ໄດ້ຮັບການຊົງ ໄຖ່ຕະຫຼອດໄປເປັນນິດ. “ຄົນຊອບທຳຈະໄດ້ຮັບດິນແດນເປັນມໍລະດົກ ແລະ ຈະອາໄສຢູ່ທີ່ນັ້ນສືບໄປ ເປັນນິດ.” (ເພງສັນລະເສີນ 37:29). {GC 674.3}

ຫຼາຍຄົນບໍ່ກ້າຄິດເຖິງມໍລະດົກທີ່ຈະໄດ້ຮັບນັ້ນວ່າເປັນຄວາມຈິງ ຈຶ່ງສະຫຼຸບວ່າເປັນເລື່ອງອຸປະມາ ອຸປະໄມ. ແຕ່ພຣະຄຣິສຊົງຢືນຢັນຕໍ່ພວກສາວົກຂອງພຣະອົງວ່າ ພຣະອົງໄປຈັດຕຽມບ່ອນຢູ່ໃຫ້ພວກເຂົາ ໃນຜາສາດຂອງພຣະບິດາ. ຄົນທີ່ຍອມຮັບຄຳສອນໃນພຣະຄຳຂອງພຣະເຈົ້າ ຈະມີຄວາມຮູ້ຢູ່ສ່ວນ ໜຶ່ງກ່ຽວກັບສະຫວັນ. ໃນຂະນະດຽວກັນ, “ສິ່ງທີ່ຕາບໍ່ເຫັນ ຫູບໍ່ໄດ້ຍິນ ແລະ ສິ່ງທີ່ມະນຸດຄິດບໍ່ ອອກ ແມ່ນສິ່ງນັ້ນແຫຼະ ທີ່ພຣະເຈົ້າໄດ້ຊົງຈັດຕຽມໄວ້ ໃຫ້ແກ່ຄົນທັງຫຼາຍທີ່ຮັກພຣະອົງ.” (1 ໂກຣິນໂທ 2:9). ສຳນວນພາສາຂອງມະນຸດບໍ່ສາມາດບັນລະຍາຍເຖິງລາງວັນທີ່ຄົນຊອບທຳຈະໄດ້ຮັບ. ມີແຕ່ຄົນ ທີ່ໄປເຖິງເທົ່ານັ້ນທີ່ຈະໄດ້ເຫັນ. ມະນຸດຜູ້ຢູ່ໃນສະພາບທີ່ຕ້ອງຕາຍ ບໍ່ສາມາດຄິດຈິນຕະນາການເຖິງ ສະຫງ່າຣາສີແຫ່ງສະຫວັນເມືອງແມນຂອງພຣະເຈົ້າໄດ້. {GC 674.4}

ພຣະຄຳພີເອີ້ນມໍລະດົກຂອງຜູ້ທີ່ໄດ້ຮັບຄວາມລອດວ່າ “ບ້ານເມືອງ.” (ເຮັບເຣີ 11:14–16). ພຣະ-ຄຣິສຈະຊົງນຳຄົນຂອງພຣະອົງເຖິງບໍ່ນ້ຳພຸແຫ່ງຊີວິດເໝືອນດັ່ງຜູ້ລ້ຽງແກະນຳຝູງແກະຂອງຕົນ. ຕົ້ນໄມ້ ແຫ່ງຊີວິດອອກຜົນທຸກເດືອນ ແລະ ໃບໄມ້ຂອງຕົ້ນນັ້ນ ແມ່ນເພື່ອປະໂຫຍດຂອງບັນດາປະຊາຊາດ. ມີ ລຳຫ້ວຍໄຫຼຢູ່ຕະຫຼອດເວລາ ນ້ຳໃສສະອາດເໝືອນແກ້ວ. ຂ້າງລຳນ້ຳນັ້ນມີຕົ້ນໄມ້ໂບກໄປມາຕາມສາຍ ລົມ, ມີທາງເດີນໃຕ້ຮົ່ມເງົາຂອງຕົ້ນໄມ້ເຫຼົ່ານັ້ນ ກຽມໄວ້ສຳລັບຄົນທັງຫຼາຍທີ່ໄດ້ຮັບການຊົງໄຖ່. ມີ ທົ່ງຫຍ້າອັນກວ້າງໄກແວດລ້ອມໄປດ້ວຍເນີນພູອັນງົດງາມ ແລະ ສາຍພູຂອງພຣະເຈົ້າຢືນຢູ່ຢ່າງສູງ ສະຫງ່າ. ຄົນຂອງພຣະເຈົ້າທີ່ອາໄສໃນໂລກເໝືອນຄົນແປກຖິ່ນແປກໜ້າ ຈະໄດ້ບ້ານຢູ່ໃນທົ່ງຫຍ້າຂ້າງ ລຳທານເຫຼົ່ານັ້ນ. {GC 675.1}

“ປະຊາຊົນຂອງພຣະເຈົ້າຈະບໍ່ວິຕົກກັງວົນກັບສິ່ງໃດ ໆ ຕໍ່ໄປ ແລະ ບ້ານເຮືອນຂອງພວກເຂົາກໍຈະ ມີແຕ່ສັນຕິສຸກ ແລະ ຄວາມປອດໄພ.” “ສຽງຂອງຄວາມຮຸນແຮງນັ້ນຈະບໍ່ມີຕໍ່ໄປ ຄວາມຈິບຫາຍຈະບໍ່ ມາທຳລາຍປະເທດອີກ. ເຮົາຈະເປັນດັ່ງກຳແພງລ້ອມປົກປ້ອງຄຸ້ມຄອງ, ເຈົ້າຈະຍົກຍໍເຮົາເພາະເຮົາຊ່ວຍ ເຈົ້າໃຫ້ພົ້ນ.” “ເຂົາຈະປຸກເຮືອນ ແລະ ຢູ່ໃນເຮືອນນັ້ນ ແລະ ເຂົາຈະປູກສວນອະງຸ່ນ ແລະ ກິນໝາກ ຈາກສວນນັ້ນ. ເຂົາຈະກໍ່ສ້າງບໍ່ແມ່ນໃຫ້ຜູ້ອື່ນຢູ່, ເຂົາຈະປູກບໍ່ແມ່ນໃຫ້ຜູ້ອື່ນກິນ . . . ຄົນທັງຫຼາຍທີ່ເຮົາໄດ້

ເລືອກໄວ້ຈະຮັບປະໂຫຍດເອງຈາກກິດຈະການແຫ່ງມືຂອງເຂົາ.” (ເອຊາຢາ 32:18; 60:18; ເອຊາຢາ 65:21, 22 ດັດແປງຈາກສະບັບລາວບູຮານ). {GC 675.2}

“ປ່າກັບດິນເປົ່າຈະຊົມຊື່ນຍິນດີ, ບ່ອນເປົ່າຈະຕື່ນດ້ວຍຄວາມຍິນດີ ແລະ ຈະບານຄືດອກກຸຫຼາບ.” “ຕົ້ນສົນຈະງອກໃຫຍ່ຂຶ້ນແທນຕົ້ນໜາມ ກົກໄມ້ຫອມຈະເກີດຂຶ້ນແທນກ່ຳໜາມ.” “ໝາປ່າກັບລູກແກະຈະອາໄສຢູ່ນຳກັນ, ເສືອດາວຈະນອນຢູ່ຂ້າງລູກແບ້ . . . ແລະ ເດັກນ້ອຍຄົນໜຶ່ງຈະນຳພາພວກມັນ.” ພຣະເຈົ້າຊົງກ່າວວ່າ: “ພວກມັນຈະບໍ່ເຮັດຮ້າຍ ຫຼື ທຳລາຍກັນ ຕະຫຼອດທົ່ວພູເຂົາສັກສິດຂອງເຮົາ.” (ເອຊາຢາ 35:1 ສະບັບລາວບູຮານ; 55:13; ເອຊາຢາ 11:6, 9 LCV). {GC 675.3}

ທ່າມກາງບັນຍາກາດຂອງສະຫວັນ ຄວາມເຈັບປວດບໍ່ສາມາດເກີດຂຶ້ນໄດ້. ຈະບໍ່ມີການຫຼັ່ງນ້ຳຕາ, ຈະບໍ່ມີການແຫ່ສົບ ຫຼື ການໄວ້ທຸກ. “ຄວາມຕາຍຈະບໍ່ມີອີກຕໍ່ໄປ. ຄວາມໂສກເສົ້າ, ການຮ້ອງໄຫ້ ແລະ ຄວາມເຈັບປວດຈະບໍ່ມີອີກຕໍ່ໄປ ເພາະວ່າສິ່ງທີ່ມີຢູ່ໃນຄາວກ່ອນນັ້ນ ກໍໄດ້ຜ່ານພົ້ນໄປແລ້ວ.” “ບໍ່ມີຜູ້ໃດທີ່ຢູ່ໃນດິນແດນຂອງພວກເຮົາ ຈະຈົ່ມວ່າຕົນເຈັບໄຂ້ໄດ້ປ່ວຍ ແລະ ການບາບທັງໝົດຂອງພວກເຮົາຈະໄດ້ຮັບອະໄພ.” (ພຣະນິມິດ 21:4; ເອຊາຢາ 33:24). {GC 676.1}

ນະຄອນເຢຣູຊາເລັມໃໝ່ກໍຢູ່ທີ່ນັ້ນ ເປັນມະຫານະຄອນຂອງໂລກທີ່ໄດ້ຮັບການສ້າງຂຶ້ນໃໝ່, “ເປັນດັ່ງມົງກຸດອັນງົດງາມໃນມືຂອງພຣະເຈົ້າຢາເວ.” “ນະຄອນນັ້ນປະກອບດ້ວຍສະຫງ່າຣາສີຂອງພຣະເຈົ້າ ມີແສງຮຸ່ງເຮືອງເໝືອນເພັດ ເໝືອນແກ້ວມະນີໂຊດອັນເສາະໃສ.” “ປະຊາຊາດທັງໝົດໃນໂລກຈະທ່ຽວໄປມາຢູ່ທ່າມກາງແສງສະຫວ່າງຂອງນະຄອນນັ້ນ ແລະ ບັນດາກະສັດໃນແຜ່ນດິນໂລກຈະນຳເອົາສະຫງ່າຣາສີຂອງຕົນເຂົ້າໄປໃນນະຄອນນັ້ນ.” ພຣະເຈົ້າຊົງກ່າວວ່າ: “ເຮົາເອງກໍຈະເຕັມໄປດ້ວຍຄວາມຊົມຊື່ນຍິນດີຍ້ອນນະຄອນເຢຣູຊາເລັມ ແລະ ປະຊາຊົນໃນນະຄອນນີ້.” “ທີ່ສະຖິດຂອງພຣະເຈົ້າກໍຢູ່ກັບມະນຸດແລ້ວ, ພຣະອົງຈະສະຖິດຢູ່ກັບພວກເຂົາ ແລະ ພວກເຂົາກໍຈະເປັນໄພ່ພົນຂອງພຣະອົງ; ພຣະເຈົ້າເອງຈະສະຖິດຢູ່ກັບພວກເຂົາ ແລະ ຈະຊົງເປັນພຣະເຈົ້າຂອງພວກເຂົາ.” (ເອຊາຢາ 62:3; ພຣະນິມິດ 21:11, 24; ເອຊາຢາ 65:19; ພຣະນິມິດ 21:3). {GC 676.2}

ບໍ່ມີກາງຄືນໃນນະຄອນຂອງພຣະເຈົ້າ, ບໍ່ມີໃຜຕ້ອງການພັກຜ່ອນ. ທີ່ນັ້ນຈະບໍ່ຮູ້ສຶກເມື່ອຍໃນການເຮັດຕາມນ້ຳພຣະໄທຂອງພຣະເຈົ້າ ແລະ ໃນການສັນລະເສີນພຣະນາມຂອງພຣະອົງ. ເຮົາຈະຮູ້ສຶກສົດຊື່ນຢູ່ຕະຫຼອດເວລາ ເໝືອນດັ່ງອາລຸນອັນໃໝ່. “ພວກເຂົາຈະບໍ່ຕ້ອງການແສງໂຄມໄຟ ຫຼື ແສງຕາເວັນ, ເພາະວ່າອົງພຣະຜູ້ເປັນເຈົ້າ ພຣະເຈົ້າຈະເປັນແສງສະຫວ່າງຂອງພວກເຂົາ.” (ພຣະນິມິດ 22:5). ພຣະຣັດສະໝີຂອງພຣະເຈົ້າ ແລະ ພຣະເມສານ້ອຍ ຈະສ່ອງສະຫວ່າງໃນນະຄອນບໍຣິສຸດ ດ້ວຍຄວາມສະຫວ່າງທີ່ບໍ່ມີວັນມືດລົງ ສະຫວ່າງສະໄຫວຍິ່ງກວ່າດວງອາທິດຍາມທ່ຽງວັນ ແຕ່ຈະບໍ່ເຮັດໃຫ້ເຄືອງຕາ. ຜູ້ທີ່ໄດ້ຮັບການຊົງໄຖ່ຈະດຳເນີນຢູ່ໃນຄວາມສະຫວ່າງຂອງພຣະເຈົ້າ ອັນເປັນກາງເວັນທີ່ບໍ່ມີວັນຈົບສິ້ນ. {GC 676.3}

“ຂ້າພະເຈົ້າບໍ່ໄດ້ເຫັນມີພຣະວິຫານຢູ່ໃນນະຄອນນັ້ນ ເພາະແມ່ນອົງພຣະຜູ້ເປັນເຈົ້າ ພຣະເຈົ້າອົງຊົງຣິດອຳນາດຍິ່ງໃຫຍ່ ແລະ ພຣະເມສານ້ອຍເປັນພຣະວິຫານຂອງນະຄອນນັ້ນ.” (ພຣະນິມິດ 21:22). ຄົນຂອງພຣະເຈົ້າໄດ້ຮັບສິດທິພິເສດທີ່ຈະສົນທະນາກັບພຣະບິດາ ແລະ ພຣະບຸດໂດຍກົງ. “ດຽວນີ້ເຮົາທັງຫຼາຍເຫັນພໍມົວໆ ເໝືອນເບິ່ງໃນແວ່ນ.” (1 ໂກຣິນໂທ 13:12). ເຮົາເຫັນພຣະລັກສະນະຂອງພຣະເຈົ້າທີ່ສະທ້ອນຢູ່ໃນທຳມະຊາດ ແລະ ຜ່ານການຊົງນຳຂອງພຣະອົງໃນຊີວິດຂອງມະນຸດ, ທັງໝົດນີ້ເປັນພາບມົວເໝືອນເບິ່ງໃນແວ່ນ. ແຕ່ເມື່ອເຖິງເວລານັ້ນ ເຮົາຈະເຫັນພຣະອົງຕໍ່ໜ້າພຣະພັກໂດຍບໍ່ມີຜ້າກັ້ງຂັ້ນກາງ. ເຮົາຈະຢືນຢູ່ຕໍ່ໜ້າພຣະອົງ ແລະ ເບິ່ງພຣະຣັດສະໝີທີ່ສ່ອງອອກຈາກພຣະພັກຂອງພຣະອົງ. {GC 676.4}

ໄຊຊະນະແຫ່ງຄວາມຮັກຂອງພຣະເຈົ້າ

ທີ່ນັ້ນຜູ້ທີ່ໄດ້ຮັບການຊົງໄຖ່ຈະ “ຮູ້ຢ່າງສົມບູນເໝືອນພຣະເຈົ້າຊົງຮູ້ຈັກເຮົາແລ້ວ.” (1 ໂກຣິນໂທ 13:12). ຄວາມຮັກ ແລະ ຄວາມເອັນດູທີ່ພຣະເຈົ້າປະທານໄວ້ໃນຈິດໃຈຂອງມະນຸດຈະໄດ້ສະແດງອອກຢ່າງແທ້ຈິງ ແລະ ຢ່າງອົບອຸ່ນທີ່ສຸດ. ຄວາມສຸກສ່ວນໜຶ່ງຂອງບັນດາຜູ້ທີ່ໄດ້ຮັບການຊົງໄຖ່ ຄືການສົນທະນາ ແລະ ການໃຊ້ຊີວິດຢ່າງເປັນນໍ້າໜຶ່ງໃຈດຽວກັນກັບໝູ່ທູດສະຫວັນບໍຣິສຸດ ແລະ ບັນດາຜູ້ສັດຊື່ຈາກຍຸກສະໄໝຕ່າງ ໆ, ຄືຜູ້ທີ່ຊຳລະເສື້ອຜ້າຂອງຕົນໃຫ້ຂາວສະອາດ ໃນພຣະໂລຫິດຂອງພຣະເມສານ້ອຍ. ເມື່ອນັ້ນ, ມະນຸດ ແລະ ຊາວສະຫວັນຈະຜູກພັນກັນເປັນຄອບຄົວດຽວກັນ. (ເບິ່ງ ເອເຟໂຊ 3:15). {GC 677.1}

ຜູ້ທີ່ຢູ່ໃນນະຄອນນັ້ນມີຊີວິດອະມະຕະ ແລະ ຈະມີຄວາມຊົມຊື່ນຍິນດີຢູ່ສະເໝີ ໃນການພິຈາລະນາເຖິງຝີພຣະຫັດຂອງພຣະເຈົ້າທີ່ປາກົດຢູ່ໃນສິ່ງທີ່ພຣະອົງຊົງສ້າງ ແລະ ຈະມີຄວາມສຸກໃນການຄິດໄຕ່ຕອງເຖິງຂໍ້ລ້ຳເລີດແຫ່ງຄວາມຮັກຂອງພຣະເຈົ້າທີ່ໄຖ່ມະນຸດໃຫ້ລອດ. ທີ່ນັ້ນບໍ່ມີສັດຕູທີ່ໃຈຮ້າຍທີ່ຈະລໍ້ລວງໃຫ້ລືມພຣະເຈົ້າ. ຄວາມສາມາດໃນທຸກດ້ານຈະໄດ້ຮັບການພັດທະນາ; ຄົນທີ່ນັ້ນຈະບໍ່ຮູ້ສຶກເມື່ອຍກັບການຮຽນສິ່ງໃໝ່ ໆ. ໃນສະຫວັນຜູ້ທີ່ໄດ້ຮັບການໄຖ່ ຈະສາມາດເຮັດໂຄງການທີ່ຍິ່ງໃຫຍ່ ແລະ ບັນລຸເປົ້າໝາຍແຫ່ງຄວາມໃຝ່ຝັນອັນສູງສົ່ງ, ແຕ່ກໍຍັງມີສິ່ງທີ່ສູງກວ່ານັ້ນໃຫ້ເຮົາກ້າວໄປເຖິງ; ຈະມີເລື່ອງມະຫັດສະຈັນໃໝ່ ໆ, ຂໍ້ເທັດຈິງໃໝ່ ໆໃຫ້ເຮົາຄິດພິຈາລະນາ; ທີ່ນັ້ນເຮົາຈະໄດ້ພົບກັບສິ່ງໃໝ່ ໆ ທີ່ຕ້ອງໃຊ້ພະລັງກາຍ, ໃຈ ແລະ ຈິດວິນຍານ. {GC 677.2}

ຊັບພະຍາກອນທັງໝົດໃນຈັກກະວານຈະຖືກເປີດເຜີຍໃຫ້ຜູ້ທີ່ພຣະເຈົ້າຊົງໄຖ່ໄດ້ສຶກສາ. ເນື່ອງຈາກມີຮ່າງກາຍອັນເປັນອະມະຕະ, ສະນັ້ນ, ພວກເຂົາຈະບໍ່ຮູ້ສຶກເມື່ອຍລ້າໃນຂະນະທີ່ບິນໄປຢາມໂລກຕ່າງ ໆ, ຄືດາວເຄາະທັງຫຼາຍທີ່ຜູ້ອາໄສໃນນັ້ນຕ່າງຮູ້ສຶກໂສກເສົ້າເມື່ອໂລກມະນຸດຕົກສູ່ຄວາມບາບ, ແຕ່ກັບຮ້ອງເພງດ້ວຍຄວາມຊົມຊື່ນຍິນດີເມື່ອໄດ້ຮູ້ວ່າມີຄົນກັບໃຈຮັບຄວາມລອດ. ຄວາມສຸກຂອງມະນຸດທີ່ໄດ້ຮັບການຊົງໄຖ່ເກີນທີ່ຈະບັນລະຍາຍໄດ້ ໃນຂະນະທີ່ຮຽນເຖິງຄວາມສຸກ ແລະ ຄວາມຮູ້ຂອງຄົນເຫຼົ່ານັ້ນທີ່ບໍ່ເຄີຍຕົກສູ່ຄວາມບາບ. ຜູ້ທີ່ໄດ້ຮັບການຊົງໄຖ່ຈະມີສ່ວນຮ່ວມໃນຄວາມຮູ້ ແລະ ຄວາມເຂົ້າໃຈຕ່າງ ໆ ທີ່ມີການສະສົມມາຕະຫຼອດຕັ້ງແຕ່ສະໄໝຕົ້ນເດີມນັ້ນ ຈາກການໄຄ່ຄວນເຖິງການຊົງສ້າງຂອງພຣະເຈົ້າ. ພວກເຂົາເບິ່ງສະຫງ່າຣາສີຂອງສິ່ງທີ່ພຣະເຈົ້າຊົງສ້າງດ້ວຍສາຍຕາທີ່ສົດໃສບໍ່ພ່າມົວ ແລະ ເຫັນລະບົບດວງດາວຕ່າງ ໆ ທີ່ໂຄຈອນຢ່າງເປັນລະບຽບຮອບບັນລັງຂອງພຣະເຈົ້າ. ພຣະນາມຂອງພຣະຜູ້ສ້າງປະທັບໄວ້ເທິງທຸກສິ່ງ ຕັ້ງແຕ່ສິ່ງທີ່ນ້ອຍທີ່ສຸດຕະຫຼອດຈົນເຖິງສິ່ງທີ່ໃຫຍ່ທີ່ສຸດ; ທຸກສິ່ງຢ່າງລ້ວນແຕ່ສຳແດງເຖິງຣິດອຳນາດຂອງພຣະເຈົ້າ. {GC 677.3}

ທຸກປີທີ່ຜ່ານໄປຕະຫຼອດຊົ່ວນິຣັນ ຄົນທີ່ໄດ້ຮັບຄວາມລອດຈະເຂົ້າໃຈພຣະເຈົ້າ ແລະ ພຣະຄຣິສຢ່າງຊາບຊຶ້ງຍິ່ງຂຶ້ນ. ເຊັ່ນດຽວກັບຄວາມຮູ້ທີ່ພັດທະນາໄດ້, ຄວາມຮັກ ຄວາມຢຳເກງ ແລະ ຄວາມສຸກຂອງເຮົາຈະເພີ່ມຂຶ້ນຢ່າງຕໍ່ເນື່ອງ. ຍິ່ງມີການຮຽນຮູ້ເຖິງພຣະລັກສະນະນິໄສຂອງພຣະເຈົ້າເທົ່າໃດ ຄວາມນັບຖືທີ່ມີຕໍ່ພຣະອົງກໍຈະຍິ່ງຫຼາຍຂຶ້ນເທົ່ານັ້ນ. ໃນຂະນະທີ່ພຣະເຢຊູເປີດເຜີຍໃຫ້ພວກເຂົາເຫັນເຖິງຄວາມລ້ຳເລີດແຫ່ງການຊົງໄຖ່ມະນຸດຈາກຄວາມບາບ ແລະ ໄຊຊະນະອັນຍິ່ງໃຫຍ່ຂອງສົງຄາມການຕໍ່ສູ້ກັບຊາຕານ, ຈິດໃຈຂອງຄົນທັງຫຼາຍທີ່ໄດ້ຮັບການຊົງໄຖ່ ຈະເຕັມໄປດ້ວຍຄວາມຊົມຊື່ນຍິນດີໃນການອຸທິດຕົນຮັບໃຊ້ພຣະອົງ. ພວກເຂົາຈະດີດພິນດ້ວຍຄວາມສຸກຢ່າງທີ່ບໍ່ເຄີຍມີມາກ່ອນ ໃນຂະນະທີ່ຄົນນັບເປັນແສນ ໆ ລ້ານ ໆ ຮ່ວມກັນຮ້ອງເພງສັນລະເສີນ. {GC 678.1}

“ຂ້າພະເຈົ້າໄດ້ຍິນສຽງສິ່ງທີ່ມີຊີວິດທັງໝົດ ທັງໃນສະຫວັນ, ເທິງແຜ່ນດິນໂລກ, ໃຕ້ແຜ່ນດິນໂລກ

ແລະ ໃນມະຫາສະໝຸດ ຄືສິ່ງທັງປວງເຊິ່ງຢູ່ໃນທີ່ນັ້ນຮ້ອງວ່າ, ‘ຂໍໃຫ້ຄຳສັນລະເສີນ, ກຽດຕິຍົດ, ສະຫງ່າຣາສີ ແລະ ຣິດທານຸພາບ ຈົ່ງມີແດ່ພຣະອົງຜູ້ຊົງປະທັບເທິງພຣະຣາຊບັນລັງ ແລະ ແດ່ພຣະເມສານ້ອຍ ຕະຫຼອດຊົ່ວນິຣັນດອນ.’” (ພຣະນິມິດ 5:13). *{GC 678.2}*

ການຕໍ່ສູ້ມະຫາການໄດ້ສິ້ນສຸດລົງແລ້ວ, ຄວາມບາບ ແລະ ຄົນບາບບໍ່ມີອີກແລ້ວ, ທົ່ວທັງຈັກກະວານລ້ວນແຕ່ສະອາດບໍຣິສຸດ, ທຸກສິ່ງປະສານກົມກຽວກັນ. ຊີວິດ, ແສງສະຫວ່າງ ແລະ ຄວາມຊົມຊື່ນຍິນດີຫຼັ່ງໄຫຼຈາກພຣະຜູ້ສ້າງໄປຫຼໍ່ລ້ຽງຈັກກະວານອັນກວ້າງໃຫຍ່ໄພສານ. ຕັ້ງແຕ່ອະນຸພາກທີ່ເລັກນ້ອຍທີ່ສຸດຈົນເຖິງດາວເຄາະທີ່ໃຫຍ່ທີ່ສຸດ ທຸກສິ່ງເຕັມໄປດ້ວຍຄວາມສຸກແສນຍິນດີ ແລະ ຄວາມສວຍສົດງົດງາມ. ບໍ່ວ່າສິ່ງມີຊີວິດ ຫຼື ບໍ່ມີຊີວິດ ທຸກສິ່ງທຸກຢ່າງລ້ວນແຕ່ປະກາດວ່າ: “ພຣະເຈົ້າຊົງເປັນຄວາມຮັກ.” *{GC 678.3}*

ສະບັບອອນລາຍ

www.laoegw.com/lo/GC